# ພຣະຄຳພີ ມໍມອນ

---

# ຄຳສອນ ແລະ ພັນທະສັນຍາ

---

# ໄຂ່ມຸກ ອັນລ້ຳຄ່າ

# ພຣະຄຳພີມໍມອນ

ປະຈັກພະຍານອີກຢ່າງໜຶ່ງເຖິງ
ພຣະເຢຊູຄຣິດ

---

# ຄຳສອນ ແລະ
# ພັນທະສັນຍາ

ຂອງສາດສະໜາຈັກຂອງພຣະເຢຊູຄຣິດ
ແຫ່ງໄພ່ພົນຍຸກສຸດທ້າຍ

---

# ໄຂ່ມຸກ
# ອັນລ້ຳຄ່າ

ຈັດພິມໂດຍ
ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ
ເມືອງເຊົາເລັກ, ລັດຢູທາ, ສະຫະລັດອາເມຣິກາ

ກະລຸນາສົ່ງຄວາມຄິດຄວາມເຫັນ ຫລື ຄຳແນະນຳ ໄປທີ່
scriptures@ChurchofJesusChrist.org ຫລື ສົ່ງທາງໄປສະນີ ເຖິງ
Scriptures Coordination, 50 East North Temple Street, 24th Floor,
Salt Lake City, UT 84150-3220 USA.

© 2019 by Intellectual Reserve, Inc.

All rights reserved.

Printed in the United States of America 06/2019

English approval: 3/15

Translation approval: 3/15

Translation of the Book of Mormon, Doctrine and Covenants,
and Pearl of Great Price

Lao

# ສາລະບານ

*ພຣະຄຳພີມໍມອນ*


ຄຳນຳ . . . vii
ປະຈັກພະຍານຂອງພະຍານສາມຄົນ . . . ix
ປະຈັກພະຍານຂອງພະຍານແປດຄົນ . . . ix
ປະຈັກພະຍານຂອງສາດສະດາໂຈເຊັບ ສະມິດ. . . . xi
ບົດວິເຄາະໂດຍຫຍໍ້ . . . xv
1 ນີໄຟ . . . 1
2 ນີໄຟ . . . 75
ຢາໂຄບ. . . . 164
ເອໂນດ . . . 189
ເຈຣອມ. . . . 193
ອອມໄນ . . . 195
ຄຳຂອງມໍມອນ . . . 199
ໂມໄຊຢາ . . . 202
ແອວມາ. . . . 290
ຮີລາມັນ . . . 524
3 ນີໄຟ . . . 580
4 ນີໄຟ . . . 660
ມໍມອນ . . . 666
ອີເທີ . . . 692
ໂມໂຣໄນ . . . 736


*ຄຳສອນ ແລະ ພັນທະສັນຍາ*


ຄຳນຳ . . . v
ລຳດັບຕາມວັນເດືອນປີຂອງເຫດການທີ່ເກີດຂຶ້ນ . . . x
ພາກ. . . . 1
ຂໍ້ປະກາດຢ່າງເປັນທາງການ . . . 406


*ໄຂ່ມຸກອັນລ້ຳຄ່າ*


ຄຳນຳ . . . v
ໂມເຊ . . . 1
ອັບຣາຮາມ . . . 40
ໂຈເຊັບ ສະມິດ—ມັດທາຍ . . . 60
ໂຈເຊັບ ສະມິດ—ປະຫວັດ . . . 65
ຫລັກແຫ່ງຄວາມເຊື່ອ . . . 84


*ພາກທ້ອຍທ້າຍ*


ຄູ່ມືພຣະຄຳພີ. . . . 1
ລຳດັບປະຫວັດສາດ . . . 281
ຄວາມກົມກຽວຂອງພຣະກິດຕິຄຸນ . . . 287

ການແປຂອງໂຈເຊັບ ສະມິດ . . . . . . . . . . . . . . . . . . . . . . 295
ແຜນທີ່ຂອງສະໄໝພຣະຄຣິສຕະທຳຄຳພີ. . . . . . . . . . . . . . . . . . 351
ຮູບພາບຂອງສະໄໝພຣະຄຣິສຕະທຳຄຳພີ . . . . . . . . . . . . . . . . . 375
ແຜນທີ່ປະຫວັດສາດຂອງສາດສະໜາຈັກ. . . . . . . . . . . . . . . . . 411
ຮູບພາບປະຫວັດສາດຂອງສາດສະໜາຈັກ . . . . . . . . . . . . . . . . . 421

# ຄຳຫຍໍ້

*ພຣະຄຳພີເດີມ*

| | |
|---|---|
| ປຖກ | ປະຖົມມະການ |
| ອພຍ | ອົບພະຍົບ |
| ລລວ | ລະບຽບພວກເລວີ |
| ຈບຊ | ຈົດບັນຊີ |
| ພບຍ | ພຣະບັນຍັດສອງ |
| ຢຊ | ໂຢຊວຍ |
| ຜປ | ພວກຜູ້ປົກຄອງ |
| ນຣ | ນາງຣຸດ |
| 1 ຊມອ | 1 ຊາມູເອນ |
| 2 ຊມອ | 2 ຊາມູເອນ |
| 1 ກສ | 1 ກະສັດ |
| 2 ກສ | 2 ກະສັດ |
| 1 ຂຄ | 1 ຂ່າວຄາວ |
| 2 ຂຄ | 2 ຂ່າວຄາວ |
| ອຊຣ | ເອຊະຣາ |
| ນມຢ | ເນເຫມີຢາ |
| ອສທ | ເອສະເທີ |
| ໂຢບ | ໂຢບ |
| ພສສ | ເພງສັນລະເສີນ |
| ສພສ | ສຸພາສິດ |
| ປຍຈ | ປັນຍາຈານ |
| ຍພ | ຍອດເພງ |
| ອຊຢ | ເອຊາຢາ |
| ຢມຢ | ເຢເຣມີຢາ |
| ພຄຄ | ເພງຄໍ່າຄວນ |
| ອຊກ | ເອເຊກຽນ |
| ດນອ | ດານີເອນ |
| ຣສອ | ໂຮເສອາ |
| ຢອ | ໂຢເອນ |
| ອມ | ອາໂມດ |
| ອບຢ | ໂອບາດີຢາ |
| ຢນ | ໂຢນາ |
| ມກ | ມີກາ |
| ນຣ | ນາຣູມ |
| ຮບກ | ຮາບາກຸກ |
| ຊຟຢ | ເຊຟານີຢາ |
| ຮກ | ຮັກກາຍ |
| ຊກຢ | ເຊກາຣີຢາ |
| ມລກ | ມາລາກີ |

*ພຣະຄຳພີໃໝ່*

| | |
|---|---|
| ມທ | ມັດທາຍ |
| ມຣກ | ມາຣະໂກ |
| ລກ | ລູກາ |
| ຢຮ | ໂຢຮັນ |
| ກຈກ | ກິດຈະການ |
| ຣມ | ໂຣມ |
| 1 ກຣທ | 1 ໂກຣິນໂທ |
| 2 ກຣທ | 2 ໂກຣິນໂທ |
| ຄລຕ | ຄາລາເຕຍ |
| ອຟຊ | ເອເຟໂຊ |
| ຟລປ | ຟີລິບປອຍ |
| ກລຊ | ໂກໂລຊາຍ |
| 1 ທສນ | 1 ເທສະໂລນິກ |
| 2 ທສນ | 2 ເທສະໂລນິກ |
| 1 ຕມທ | 1 ຕີໂມທຽວ |
| 2 ຕມທ | 2 ຕີໂມທຽວ |
| ຕຕ | ຕີໂຕ |
| ຟລມ | ຟີເລໂມນ |
| ຮຣ | ເຮັບເຣີ |
| ຢກບ | ຢາໂກໂບ |
| 1 ປຕ | 1 ເປໂຕ |
| 2 ປຕ | 2 ເປໂຕ |
| 1 ຢຮ | 1 ໂຢຮັນ |
| 2 ຢຮ | 2 ໂຢຮັນ |
| 3 ຢຮ | 3 ໂຢຮັນ |
| ຢດ | ຢູດາ |
| ພນມ | ພຣະນິມິດ |

*ພຣະຄຳພີມໍມອນ*

| | |
|---|---|
| 1 ນຟ | 1 ນີໄຟ |
| 2 ນຟ | 2 ນີໄຟ |
| ຢຄ | ຢາໂຄບ |
| ອນ | ເອໂນດ |
| ຈຣ | ເຈຣອມ |
| ອມນ | ອອມໄນ |
| ຄມ | ຄຳຂອງມໍມອນ |
| ມຊຢ | ໂມໄຊຢາ |
| ແອວ | ແອວມາ |
| ຮລມ | ຮີລາມັນ |
| 3 ນຟ | 3 ນີໄຟ |
| 4 ນຟ | 4 ນີໄຟ |
| ມມ | ມໍມອນ |
| ອທ | ອີເທີ |
| ມຣນ | ໂມໂຣໄນ |

*ຄຳສອນ ແລະ ພັນທະສັນຍາ*

| | |
|---|---|
| ຄພ | ຄຳສອນ ແລະ ພັນທະສັນຍາ |
| ຂປ | ຂໍ້ປະກາດຢ່າງເປັນທາງການ |

*ໄຂ່ມຸກອັນລ້ຳຄ່າ*

| | |
|---|---|
| ມຊ | ໂມເຊ |
| ອຣຮ | ອັບຣາຮາມ |
| ຈສ—ມ | ໂຈເຊັບ ສະມິດ—ມັດທາຍ |
| ຈສ—ປ | ໂຈເຊັບ ສະມິດ—ປະຫວັດ |
| ຫຼຊ | ຫລັກແຫ່ງຄວາມເຊື່ອ |

*ຄຳຫຍໍ້ ແລະ ຄຳອະທິບາຍອື່ນໆ*

| | |
|---|---|
| ປຈສ | ການແປຂອງໂຈເຊັບ ສະມິດ |
| ຄມພ | ຄູ່ມືພຣະຄຳພີ |
| ເຮັບເຣີ | ຄຳແປ ໃນອີກຄວາມໝາຍໜຶ່ງ ຈາກເຮັບເຣີ |
| ກຣີກ | ຄຳແປ ໃນອີກຄວາມໝາຍໜຶ່ງ ຈາກກຣີກ |
| ອສ | ຄຳອະທິບາຍສຳນວນ ແລະ ຖ້ອຍຄຳທີ່ເຂົ້າໃຈຍາກ |
| ພ | ໃນອີກຄວາມໝາຍໜຶ່ງ ເພື່ອອະທິບາຍຄວາມໝາຍຂອງຂໍ້ຄວາມສະໄໝບູຮານ |

# ພຣະຄຳພີມໍມອນ

## ປະຈັກພະຍານອີກຢ່າງໜຶ່ງເຖິງ
## ພຣະເຢຊູຄຣິດ

ສະບັບຕົ້ນເປັນພາສາອັງກິດຖືກພິມໃນ
ເມືອງພາໄມຣາ, ລັດນິວຢອກ, ສະຫະລັດອາເມຣິກາ, ໃນປີ 1830

# ພຣະຄຳພີມໍມອນ

ເລື່ອງລາວທີ່ຂຽນໄວ້ດ້ວຍ

## ມືຂອງມໍມອນ

ໃນແຜ່ນຈາລຶກ
ທີ່ໄດ້ມາຈາກແຜ່ນຈາລຶກຂອງນີໄຟ

ດັ່ງນັ້ນ ພຣະຄຳພີນີ້ຈຶ່ງເປັນຄວາມຫຍໍ້ມາຈາກບັນທຶກຂອງຜູ້ຄົນຊາວນີໄຟ ແລະ ຂອງຊາວເລມັນນຳອີກ—ຂຽນເຖິງຊາວເລມັນຜູ້ເປັນສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນ ແລະ ເຖິງຊາວຢິວ ແລະ ຄົນຕ່າງຊາດນຳອີກ—ຂຽນໂດຍພຣະບັນຍັດ ແລະ ໂດຍພຣະວິນຍານແຫ່ງການທຳນາຍ ແລະ ຂອງການເປີດເຜີຍ ຊຶ່ງຂຽນ ແລະ ຜະນຶກ ແລະ ເຊື່ອງໄວ້ກັບພຣະຜູ້ເປັນເຈົ້າ ເພື່ອຈະບໍ່ໄດ້ຖືກທຳລາຍ—ເພື່ອຈະໄດ້ນຳອອກມາໂດຍຂອງປະທານ ແລະ ໂດຍອຳນາດຂອງພຣະເຈົ້າ ເພື່ອການແປພຣະຄຳນີ້—ຜະນຶກໄວ້ໂດຍມືຂອງໂມໂຣໄນ ແລະ ເຊື່ອງໄວ້ກັບພຣະຜູ້ເປັນເຈົ້າ ເພື່ອຈະນຳອອກມາໃນເວລາອັນເໝາະສົມໂດຍທາງຄົນຕ່າງຊາດ—ການແປພຣະຄຳພີນີ້ສຳເລັດໄດ້ໂດຍຂອງປະທານຂອງພຣະເຈົ້າ.

ຄວາມຫຍໍ້ທີ່ເອົາມາຈາກໜັງສືອີເທີມີຢູ່ພ້ອມ ເປັນບັນທຶກຂອງຜູ້ຄົນຂອງເຜົ່າຢາເຣັດ ຊຶ່ງກະຈັດກະຈາຍໄປໃນເວລາທີ່ພຣະຜູ້ເປັນເຈົ້າໄດ້ກະທຳໃຫ້ພາສາຂອງມະນຸດສັບສົນ ເມື່ອເວລາຄົນເຫລົ່ານັ້ນກຳລັງສ້າງຫໍສູງ ເພື່ອຂຶ້ນໄປໃຫ້ເຖິງສະຫວັນ—ອັນເປັນໄປເພື່ອສະແດງແກ່ຜູ້ທີ່ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນວ່າ ພຣະຜູ້ເປັນເຈົ້າໄດ້ກະທຳສິ່ງທີ່ຍິ່ງໃຫຍ່ອັນໃດແດ່ເພື່ອບັນພະບຸລຸດຂອງພວກເຂົາ ແລະ ເພື່ອພວກເຂົາຈະໄດ້ຮູ້ຈັກພັນທະສັນຍາຂອງພຣະຜູ້ເປັນເຈົ້າວ່າ ພວກເຂົາຈະບໍ່ຖືກປະຖິ້ມຕະຫລອດການ—ແລະ ເພື່ອໃຫ້ຊາວຢິວ ແລະ ຄົນຕ່າງຊາດຮັບຮູ້ວ່າພຣະເຢຊູຄື ພຣະຄຣິດ ພຣະເຈົ້າຜູ້ສະຖິດນິລັນດອນ ຜູ້ຊຶ່ງສະແດງພຣະອົງເອງໃຫ້ປະຈັກແກ່ປະຊາຊາດທັງປວງ—ແລະ ບັດນີ້ຖ້າຫາກຈະມີສິ່ງທີ່ຂາດຕົກບົກພ່ອງກໍເປັນຄວາມຜິດຂອງມະນຸດ; ດັ່ງນັ້ນ ຈົ່ງຢ່າກ່າວໂທດເລື່ອງຂອງພຣະເຈົ້າເພື່ອທ່ານຈະໄດ້ພົບວ່າບໍ່ມີມົນທິນທີ່ບັນລັງພິພາກສາຂອງພຣະຄຣິດ.

ສະບັບຕົ້ນຈາກແຜ່ນຈາລຶກຖືກແປເປັນພາສາອັງກິດ
ໂດຍ ໂຈເຊັບ ສະມິດ, ຜູ້ລູກ

# ສາລະບານ


ຄຳນຳ . . . . . . . . . . . . . . . . . . . . . . . . vii
ປະຈັກພະຍານຂອງພະຍານສາມຄົນ . . . . . . . . . . . . . . . . .ix
ປະຈັກພະຍານຂອງພະຍານແປດຄົນ . . . . . . . . . . . . . . . . .ix
ປະຈັກພະຍານຂອງສາດສະດາໂຈເຊັບ ສະມິດ . . . . . . . . . . . . .xi
ບົດວິເຄາະໂດຍຫຍໍ້ . . . . . . . . . . . . . . . . . . . . xv
1 ນີໄຟ . . . . . . . . . . . . . . . . . . . . . . . . . 1
2 ນີໄຟ . . . . . . . . . . . . . . . . . . . . . . . . 75
ຢາໂຄບ . . . . . . . . . . . . . . . . . . . . . . . 164
ເອໂນດ. . . . . . . . . . . . . . . . . . . . . . . . 189
ເຈຣອມ. . . . . . . . . . . . . . . . . . . . . . . . 193
ອອມໄນ . . . . . . . . . . . . . . . . . . . . . . . 195
ຄຳຂອງມໍມອນ . . . . . . . . . . . . . . . . . . . . 199
ໂມໄຊຢາ . . . . . . . . . . . . . . . . . . . . . . . 202
ແອວມາ . . . . . . . . . . . . . . . . . . . . . . . 290
ຮີລາມັນ . . . . . . . . . . . . . . . . . . . . . . 524
3 ນີໄຟ . . . . . . . . . . . . . . . . . . . . . . . 580
4 ນີໄຟ . . . . . . . . . . . . . . . . . . . . . . . 660
ມໍມອນ . . . . . . . . . . . . . . . . . . . . . . . 666
ອີເທີ . . . . . . . . . . . . . . . . . . . . . . . 692
ໂມໂຣໄນ . . . . . . . . . . . . . . . . . . . . . . 736

# ຄຳນຳ

ພຣະຄຳພີມໍມອນເປັນພຣະຄຳພີອັນສັກສິດຄ້າຍຄືກັບພຣະຄຣິສຕະທຳຄຳພີ. ມັນເປັນບັນທຶກການພົວພັນຂອງພຣະເຈົ້າກັບຜູ້ອາໄສຢູ່ໃນອາເມຣິກາໃນສະໄໝບູຮານ ແລະ ປະກອບດ້ວຍຄວາມສົມບູນຂອງພຣະກິດຕິຄຸນອັນເປັນນິດ.

ພຣະຄຳພີເຫລັ້ມນີ້ຖືກຂຽນໄວ້ໂດຍສາດສະດາຫລາຍໆທ່ານໃນສະໄໝບູຮານ ໂດຍວິນຍານແຫ່ງການທຳນາຍ ແລະ ການເປີດເຜີຍ. ຖ້ອຍຄຳ ຫລື ອັກຂະລະໃນແຜ່ນຈາລຶກຄຳແມ່ນຖືກຂຽນ ແລະ ກ່າວເຖິງ ແລະ ຫຍໍ້ໂດຍສາດສະດາ-ນັກປະຫວັດສາດຊື່ວ່າມໍມອນ. ບັນທຶກນີ້ໃຫ້ເລື່ອງລາວຂອງຄົນສອງເຜົ່າ. ເຜົ່າໜຶ່ງມາຈາກເຢຣູຊາເລັມໃນສະໄໝ 600 ປີ ກ່ອນຄຣິດຕະສັກກະລາດ. ຫລັງຈາກນັ້ນ ຄົນເຫລົ່ານີ້ໄດ້ແຍກອອກເປັນສອງປະຊາຊາດເທົ່າທີ່ຮູ້ກັນວ່າ ຊາວນີໄຟກັບຊາວເລມັນ. ອີກເຜົ່າໜຶ່ງທີ່ມາຮອດກ່ອນເມື່ອພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ພາສາຂອງມະນຸດສັບສົນທີ່ສ້າງຫໍບາເບນ. ເຜົ່ານີ້ໄດ້ຮູ້ກັນວ່າ ຊາວຢາເຣັດ. ຫລັງຈາກຫລາຍພັນປີຜ່ານໄປ, ພວກເຂົາຖືກທຳລາຍໝົດນອກຈາກຊາວເລມັນເທົ່ານັ້ນທີ່ຍັງເຫລືອຢູ່, ແລະ ພວກເຂົາເປັນບາງສ່ວນໃນບັນດາບັນພະບຸລຸດຂອງຊາວອິນເດຍແດງ.

ເຫດການທັງໝົດທີ່ບັນທຶກໄວ້ໃນພຣະຄຳພີມໍມອນນັ້ນ ເປັນການປະຕິບັດສາດສະໜາກິດສ່ວນຕົວຂອງອົງພຣະເຢຊູຄຣິດເຈົ້າຕໍ່ບັນດາຊາວນີໄຟບໍ່ນານຫລັງຈາກການຟື້ນຄືນພຣະຊົນຂອງພຣະອົງ. ມັນໄດ້ເວົ້າເຖິງຄຳສອນພຣະກິດຕິຄຸນ ແລະ ແຜນແຫ່ງຄວາມລອດ ແລະ ບອກມະນຸດທຸກຄົນເຖິງສິ່ງທີ່ພວກເຂົາຕ້ອງເຮັດເພື່ອຈະໄດ້ຮັບສັນຕິສຸກໃນຊີວິດນີ້ ແລະ ຄວາມລອດນິລັນດອນໃນຊີວິດທີ່ຈະມາເຖິງ.

ຫລັງຈາກມໍມອນຈົບບັນທຶກການຂຽນຂອງເພິ່ນແລ້ວ, ເພິ່ນໄດ້ມອບບັນທຶກໃຫ້ແກ່ລູກຊາຍຂອງເພິ່ນຜູ້ມີຊື່ວ່າ ໂມໂຣໄນ. ເພິ່ນໄດ້ເພີ່ມເຕີມຄຳເວົ້າເລັກໜ້ອຍ ແລ້ວໄດ້ເຊື່ອງແຜ່ນຈາລຶກໄວ້ໃນເນີນພູຄູໂມຣາ. ຕໍ່ມາໃນວັນທີ 21 ເດືອນກັນຍາ, 1823, ໂມໂຣໄນຜູ້ດຽວກັນນີ້ໄດ້ມາປະກົດຕົວໂດຍລັດສະໝີພາບຫລັງຈາກໄດ້ຟື້ນຄືນຊີວິດຕໍ່ສາດສະດາໂຈເຊັບ ສະມິດ ແລະ ແນະນຳເພິ່ນກ່ຽວກັບບັນທຶກຂອງສະໄໝບູຮານເພື່ອປະສົງໃຫ້ເພິ່ນແປມັນເປັນພາສາອັງກິດ.

ເມື່ອເຖິງເວລາແຜ່ນຈາລຶກໄດ້ຖືກມອບໃຫ້ແກ່ໂຈເຊັບ ສະມິດ ເປັນຜູ້ແປໂດຍຜ່ານຂອງປະທານ ແລະ ອຳນາດຂອງພຣະເຈົ້າ. ປະຈຸບັນນີ້ບັນທຶກດັ່ງກ່າວນີ້ໄດ້ຖືກພິມເປັນຫລາຍພາສາ ຊຶ່ງເປັນພະຍານໃໝ່ ແລະ ເພີ່ມເຕີມວ່າ ພຣະເຢຊູຄຣິດເປັນພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ແລະ ທຸກຄົນທີ່ມາຫາພຣະອົງ ແລະ ເຊື່ອຟັງກົດ ແລະ ພິທີການຕ່າງໆຂອງພຣະກິດຕິຄຸນຂອງພຣະອົງຈະໄດ້ຮັບຄວາມລອດ.

ກ່ຽວກັບບັນທຶກດັ່ງກ່າວນີ້ ສາດສະດາໂຈເຊັບ ສະມິດ ໄດ້ກ່າວໄວ້ວ່າ: ຂ້າພະເຈົ້າໄດ້ບອກພີ່ນ້ອງທຸກຄົນວ່າ ພຣະຄຳພີມໍມອນເປັນພຣະຄຳພີທີ່ຖືກຕ້ອງທີ່ສຸດໃນໂລກເໜືອກວ່າພຣະຄຳພີໃດໆ ແລະ ມັນເປັນທັງຫລັກສີລາສຳຄັນ ຂອງສາດສະໜາຂອງພວກເຮົາ

ແລະ ມະນຸດທຸກຄົນຈະໄດ້ເຂົ້າໃກ້ພຣະເຈົ້າໂດຍການປະຕິບັດຕາມຄຳສັ່ງສອນຂອງພຣະຄຳພີນີ້ຫລາຍກວ່າປະຕິບັດຕາມໜັງສືເຫລັ້ມອື່ນໆ.

ນອກຈາກໂຈເຊັບ ສະມິດ ໄດ້ເຫັນແຜ່ນຈາລຶກນີ້ແລ້ວ ພຣະຜູ້ເປັນເຈົ້າຍັງໄດ້ໃຫ້ສິບເອັດຄົນເຫັນນຳອີກ ເພື່ອໃຫ້ເປັນພະຍານເຖິງຄວາມຈິງ ແລະ ເຖິງຄວາມສັກສິດຂອງພຣະຄຳພີມໍມອນນີ້. ພວກເພິ່ນໄດ້ຂຽນປະຈັກພະຍານໄວ້ເປັນລາຍລັກອັກສອນ ເຊັ່ນ "ປະຈັກພະຍານຂອງພະຍານສາມຄົນ" ແລະ "ປະຈັກພະຍານຂອງພະຍານແປດຄົນ."

ພວກເຮົາຂໍເຊື້ອເຊີນທຸກຄົນທີ່ຢູ່ທຸກແຫ່ງຫົນໃຫ້ອ່ານພຣະຄຳພີມໍມອນ ແລະ ໃຫ້ໄຕ່ຕອງໃນໃຈເຖິງເລື່ອງລາວຕ່າງໆທີ່ມີໃນນັ້ນ ແລ້ວທູນຖາມພຣະເຈົ້າ ພຣະບິດາຜູ້ສະຖິດນິລັນດອນໃນພຣະນາມຂອງພຣະຄຣິດ ຖ້າພຣະຄຳພີນີ້ເປັນຄວາມຈິງຫລືບໍ່. ຜູ້ໃດທີ່ປະຕິບັດຕາມພຣະຄຳພີນີ້ ແລະ ທູນຖາມດ້ວຍສັດທາ ຜູ້ນັ້ນຈະໄດ້ຮັບປະຈັກພະຍານເຖິງຄວາມຈິງ ແລະ ຄວາມສັກສິດຂອງມັນ ໂດຍອຳນາດຂອງພຣະວິນຍານບໍລິສຸດ (ເບິ່ງ ໂມໂຣໄນ 10:3–5).

ຜູ້ທີ່ໄດ້ຮັບພະຍານອັນສັກສິດຈາກພຣະວິນຍານສັກສິດນີ້ຈະໄດ້ຮູ້ຈັກດ້ວຍອຳນາດດຽວກັນວ່າ ພຣະເຢຊູຄຣິດຄືພຣະຜູ້ຊ່ວຍໃຫ້ລອດຂອງໂລກ, ວ່າໂຈເຊັບ ສະມິດ ເປັນຜູ້ເປີດເຜີຍ ແລະ ເປັນສາດສະດາຂອງພຣະອົງໃນຍຸກສຸດທ້າຍນີ້ ແລະ ວ່າສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍເປັນອານາຈັກຂອງພຣະຜູ້ເປັນເຈົ້າ ຊຶ່ງໄດ້ຖືກສະຖາປະນາຂຶ້ນຢູ່ເທິງແຜ່ນດິນໂລກ, ຕຽມພ້ອມໄວ້ເພື່ອການສະເດັດມາຄັ້ງທີສອງຂອງພຣະເມຊີອາ.

# ປະຈັກພະຍານຂອງພະຍານສາມຄົນ

ຂໍໃຫ້ເປັນທີ່ຮູ້ຈັກແກ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ ແກ່ຜູ້ທີ່ວຽກງານນີ້ຈະມາເຖິງວ່າ: ໂດຍທາງພຣະຄຸນຂອງພຣະເຈົ້າອົງເປັນພຣະບິດາ ແລະ ອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ, ພວກເຮົາຈຶ່ງໄດ້ເຫັນແຜ່ນຈາລຶກຊຶ່ງມີບັນທຶກນີ້ຢູ່, ຊຶ່ງເປັນບັນທຶກຂອງຜູ້ຄົນຂອງຊາວນີໄຟ ແລະ ຂອງຊາວເລມັນ, ຊຶ່ງເປັນພີ່ນ້ອງຂອງພວກເຂົາເອງ, ແລະ ຂອງຜູ້ຄົນຂອງຊາວຢາເຣັດ ຊຶ່ງເປັນຜູ້ມາຈາກຫໍສູງທີ່ກ່າວເຖິງ ແລະ ພວກເຮົາຮູ້ອີກວ່າ ມັນຖືກແປອອກມາໂດຍຂອງປະທານ ແລະ ອຳນາດຂອງພຣະເຈົ້າ ເພາະສຸລະສຽງຂອງພຣະອົງໄດ້ປະກາດມັນໃຫ້ພວກເຮົາຮູ້. ດັ່ງນັ້ນ ພວກເຮົາຈຶ່ງຮູ້ແນ່ນອນວ່າ ວຽກງານນີ້ເປັນຄວາມຈິງ ແລະ ພວກເຮົາຂໍເປັນພະຍານອີກວ່າ ພວກເຮົາໄດ້ເຫັນອັກຂະລະ ຊຶ່ງຢູ່ໃນແຜ່ນຈາລຶກນັ້ນ ແລະ ມັນຖືກສະແດງແກ່ພວກເຮົາໂດຍອຳນາດຂອງພຣະເຈົ້າ ແລະ ບໍ່ແມ່ນຂອງມະນຸດ. ພວກເຮົາປະກາດດ້ວຍຖ້ອຍຄຳທີ່ມີສະຕິສຳປະຊັນຍະວ່າ ທູດອົງໜຶ່ງຂອງພຣະເຈົ້າໄດ້ລົງມາຈາກສະຫວັນ ແລະ ເພິ່ນໄດ້ນຳມັນມາວາງຢູ່ຕໍ່ໜ້າຂອງພວກເຮົາ, ວ່າພວກເຮົາເຫັນ ແລະ ເບິ່ງແຜ່ນຈາລຶກ ແລະ ອັກຂະລະທີ່ຢູ່ໃນນັ້ນ, ແລະ ພວກເຮົາຮູ້ວ່າໂດຍພຣະຄຸນຂອງພຣະເຈົ້າອົງເປັນພຣະບິດາ ແລະ ອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ, ພວກເຮົາຈຶ່ງເຫັນ ແລະ ເປັນພະຍານວ່າ ສິ່ງເຫລົ່ານີ້ເປັນຄວາມຈິງ ແລະ ເປັນສິ່ງທີ່ອັດສະຈັນຕໍ່ສາຍຕາຂອງພວກເຮົາ. ຢ່າງໃດກໍຕາມ ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ບັນຊາພວກເຮົາໃຫ້ເປັນພະຍານເຖິງສິ່ງເຫລົ່ານີ້; ດັ່ງນັ້ນ ເພື່ອປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ, ພວກເຮົາຈຶ່ງສະແດງປະຈັກພະຍານເຖິງສິ່ງເຫລົ່ານີ້ ແລະ ພວກເຮົາຮູ້ວ່າ ຖ້າຫາກພວກເຮົາມີສັດທາໃນພຣະຄຣິດ, ແລ້ວພວກເຮົາຈະກຳຈັດເລືອດຂອງມະນຸດທັງປວງອອກຈາກອາພອນຂອງພວກເຮົາ ແລະ ຈະຖືກພົບວ່າບໍ່ມີມົນທິນຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ ແລະ ຈະຢູ່ກັບພຣະອົງໃນຟ້າສະຫວັນຊົ່ວນິລັນດອນ ແລະ ຂໍເທີດທູນພຣະກຽດຕິຍົດແດ່ພຣະບິດາ ແລະ ແດ່ພຣະບຸດ ແລະ ແດ່ພຣະວິນຍານບໍລິສຸດ ຊຶ່ງເປັນພຣະເຈົ້າອົງດຽວກັນ, ອາແມນ.

ອໍລີເວີ ຄາວເດີຣີ
ເດວິດ ວິດເມີ
ມາຕິນ ແຮຣິສ

# ປະຈັກພະຍານຂອງພະຍານແປດຄົນ

ຂໍໃຫ້ເປັນທີ່ຮູ້ຈັກແກ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ ແກ່ຜູ້ທີ່ວຽກງານນີ້ຈະມາເຖິງວ່າ: ໂຈເຊັບ ສະມິດ ຜູ້ລູກ ຜູ້ແປວຽກງານນີ້ໄດ້ສະແດງແຜ່ນຈາລຶກທີ່ກ່າວເຖິງຕໍ່ພວກເຮົາ ຊຶ່ງເບິ່ງແລ້ວເປັນຄຳ ແລະ ຫລາຍຕໍ່ຫລາຍແຜ່ນ ສະມິດຜູ້

ນີ້ແປແລ້ວ ພວກເຮົາໄດ້ຈັບບາຍດ້ວຍມືຂອງພວກເຮົາ ແລະ ພວກເຮົາໄດ້ເຫັນອັກຂະລະຢູ່ໃນແຜ່ນນັ້ນອີກ ຊຶ່ງທັງໝົດນັ້ນເບິ່ງແລ້ວເປັນວຽກງານຂອງສະໄໝບູຮານ ແລະ ເປັນຝີມືທີ່ແປກປະຫລາດ ແລະ ການນີ້ພວກເຮົາເປັນພະຍານດ້ວຍຖ້ອຍຄຳທີ່ມີສະຕິສຳປະຊັນຍະວ່າ ສະມິດຜູ້ນີ້ສະແດງຕໍ່ພວກເຮົາ ເພາະພວກເຮົາໄດ້ເຫັນ ແລະ ຈັບຍົກຂຶ້ນ ແລະ ຮູ້ແນ່ນອນວ່າ ສະມິດຜູ້ນີ້ມີແຜ່ນຈາລຶກທີ່ພວກເຮົາກ່າວເຖິງ ແລະ ພວກເຮົາໃຫ້ຊື່ຂອງພວກເຮົາໄວ້ຕໍ່ໂລກເພື່ອເປັນພະຍານຕໍ່ໂລກເຖິງສິ່ງທີ່ພວກເຮົາໄດ້ເຫັນ ແລະ ພຣະເຈົ້າເປັນພະຍານວ່າ ພວກເຮົາບໍ່ໄດ້ເວົ້າຕົວະ.

| | |
|---|---|
| ຄຣິດສະຕຽນ ວິດເມີ | ໄຮຣຳ ເພຈ໌ |
| ເຈກັບ ວິດເມີ | ໂຈເຊັບ ສະມິດ, ຜູ້ພໍ່ |
| ພີເຕີ ວິດເມີ, ຜູ້ລູກ | ໄຮຣຳ ສະມິດ |
| ຈອນ ວິດເມີ | ແຊມໂຍ ເອັຈ ສະມິດ |

# ປະຈັກພະຍານຂອງສາດສະດາໂຈເຊັບ ສະມິດ

ຄຳເວົ້າຂອງສາດສະດາໂຈເຊັບ ສະມິດ ກ່ຽວກັບການນຳເອົາພຣະຄຳພີມໍມອນອອກມາ ມີດັ່ງນີ້:

"ໃນຄືນ . . . ວັນທີຊາວເອັດ ເດືອນກັນຍາ [1823] . . . ຂ້າພະເຈົ້າໄດ້ນ້ອມຕົວອະທິຖານ ແລະ ອ້ອນວອນຕໍ່ພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່. . . .

"ໃນຂະນະທີ່ຂ້າພະເຈົ້າກຳລັງເອີ້ນຫາພຣະເຈົ້າຢູ່ນັ້ນ, ຂ້າພະເຈົ້າໄດ້ເຫັນແສງສະຫວ່າງປະກົດຂຶ້ນໃນຫ້ອງຂອງຂ້າພະເຈົ້າ, ຊຶ່ງແສງນັ້ນສະຫວ່າງຂຶ້ນເລື້ອຍໆ ຈົນວ່າຫ້ອງຂອງຂ້າພະເຈົ້າແຈ້ງສະຫວ່າງຍິ່ງກວ່າຕອນທ່ຽງວັນ. ໃນທັນໃດນັ້ນ ຄົນຜູ້ໜຶ່ງກໍປະກົດຂຶ້ນຢູ່ຂ້າງຕຽງນອນຂອງຂ້າພະເຈົ້າ, ຢືນຢູ່ໃນອາກາດ, ເພາະຕີນຂອງເພິ່ນບໍ່ໄດ້ແຕະຕ້ອງພື້ນຫ້ອງເລີຍ.

"ເພິ່ນໃສ່ເສື້ອຄຸມສີຂາວຂະໜາດ. ມັນຂາວຍິ່ງກວ່າສິ່ງໃດໆໃນໂລກທີ່ຂ້າພະເຈົ້າເຄີຍເຫັນມາ; ຂ້າພະເຈົ້າເຊື່ອວ່າຈະບໍ່ມີສິ່ງໃດໃນໂລກ ທີ່ຈະເຮັດໃຫ້ປະກົດຂາວ ແລະ ສະຫວ່າງໄດ້ຢ່າງຍິ່ງເຊັ່ນນັ້ນ. ມືຂອງເພິ່ນເປືອຍເປົ່າ, ແລະ ແຂນຂອງເພິ່ນສ່ວນທີ່ເທິງຂໍ້ມືເລັກໜ້ອຍກໍເປືອຍເປົ່າເໝືອນກັນ; ຕີນຂອງເພິ່ນເປືອຍເປົ່າ, ແລະ ຂາສ່ວນທີ່ເທິງເລັກໜ້ອຍກໍເປືອຍເປົ່າເໝືອນກັນ. ຫົວ ແລະ ຄໍຂອງເພິ່ນກໍເປືອຍເປົ່າເໝືອນກັນ. ຂ້າພະເຈົ້າເຫັນໄດ້ວ່າ ເພິ່ນບໍ່ໄດ້ນຸ່ງອັນໃດອີກ ນອກຈາກເສື້ອຄຸມຕົວນັ້ນ ເພາະມັນເປີດຈົນຂ້າພະເຈົ້າສາມາດຫລຽວເຫັນໜ້າເອິກຂອງເພິ່ນ.

"ບໍ່ພຽງແຕ່ເສື້ອຄຸມຂອງເພິ່ນຂາວຢ່າງຍິ່ງເທົ່ານັ້ນ, ແຕ່ທົ່ວທັງຮ່າງກາຍຂອງເພິ່ນນັ້ນມີແສງຮຸ່ງເຫລື້ອມເກີນກວ່າທີ່ຈະພັນລະນາໄດ້, ແລະ ໜ້າຂອງເພິ່ນຄືກັນກັບຟ້າແມບເຫລື້ອມແທ້ໆ. ຫ້ອງນັ້ນສະຫວ່າງຢ່າງຍິ່ງ, ແຕ່ວ່າຍັງບໍ່ເທົ່າກັບຄວາມສະຫວ່າງທີ່ຢູ່ອ້ອມຕົວຂອງເພິ່ນ. ເມື່ອຂ້າພະເຈົ້າຫລຽວເຫັນເພິ່ນ, ທຳອິດຂ້າພະເຈົ້າກໍຢ້ານ; ແຕ່ບໍ່ດົນຄວາມຢ້ານນັ້ນກໍຫາຍໄປ.

"ເພິ່ນໄດ້ເອີ້ນຊື່ຂ້າພະເຈົ້າ ແລະ ໄດ້ເວົ້າກັບຂ້າພະເຈົ້າວ່າ ເພິ່ນແມ່ນທູດສະຫວັນທີ່ຖືກສົ່ງມາຈາກທີ່ປະທັບຂອງພຣະເຈົ້າ ໃຫ້ມາຫາຂ້າພະເຈົ້າ, ແລະ ວ່າເພິ່ນຊື່ ໂມໂຣໄນ; ວ່າພຣະເຈົ້າມີວຽກງານໃຫ້ຂ້າພະເຈົ້າເຮັດ; ແລະ ບອກວ່າຊື່ຂອງຂ້າພະເຈົ້າຈະມີຢູ່ທັງທາງດີ ແລະ ທາງຊົ່ວ ໃນບັນດາທຸກປະຊາຊາດ, ທຸກຕະກຸນ, ແລະ ທຸກພາສາ, ຫລື ວ່າຊື່ຂອງຂ້າພະເຈົ້າຈະຖືກເວົ້າເຖິງໃນທາງດີ ແລະ ທາງຊົ່ວຢູ່ໃນບັນດາຜູ້ຄົນທັງປວງ.

"ເພິ່ນໄດ້ບອກວ່າ ມັນມີໜັງສືເຫລັ້ມໜຶ່ງຝັງຢູ່, ທີ່ຖືກຂຽນໄວ້ໃນແຜ່ນຈາລຶກຄຳ, ຊຶ່ງໃຫ້ເລື່ອງລາວຂອງຜູ້ເຄີຍອາໄສຢູ່ໃນທະວີບນີ້ໃນສະໄໝກ່ອນ ແລະ ເລື່ອງຖິ່ນກຳເນີດຂອງຄົນເຫລົ່ານັ້ນ. ເພິ່ນໄດ້ບອກອີກວ່າ ຄວາມສົມບູນຂອງພຣະກິດຕິຄຸນອັນເປັນນິດ ມີຢູ່ໃນໜັງສືນັ້ນ ຕາມທີ່ພຣະຜູ້ຊ່ອຍໃຫ້ລອດໄດ້ປະທານໃຫ້ຜູ້ອາໄສຢູ່ໃນສະໄໝບູຮານ;

"ຍັງມີຫີນສອງກ້ອນຕິດຢູ່ກັບຄັນທະນູທີ່ເຮັດດ້ວຍເງິນອີກ—ແລະ ຫີນສອງກ້ອນນີ້, ຊຶ່ງຕິດຢູ່ກັບແຜ່ນປົກເອິກ, ປະກອບເປັນສິ່ງທີ່ເອີ້ນວ່າ ອຸລີມ ແລະ ທຸມມີມ—ໄດ້ຖືກຝັງໄວ້ຢູ່ກັບແຜ່ນຈາລຶກ; ການເປັນເຈົ້າຂອງ ແລະ ການໃຊ້ຫີນສອງກ້ອນນີ້ ເປັນສ່ວນປະກອບ

ຂອງການເປັນ 'ຜູ້ພະຍາກອນ' ໃນສະໄໝບູຮານ ຫລື ສະໄໝກ່ອນ; ແລະ ວ່າພຣະເຈົ້າໄດ້ຕຽມຫີນສອງກ້ອນນີ້ໄວ້ ເພື່ອຈຸດປະສົງໃນການແປໜັງສືເຫລັ້ມນີ້. . . .

"ເພິ່ນໄດ້ບອກຂ້າພະເຈົ້າອີກວ່າ ເມື່ອຂ້າພະເຈົ້າໄດ້ແຜ່ນຈາລຶກເຫລົ່ານັ້ນທີ່ເພິ່ນກ່າວເຖິງ—ເພາະເວລາທີ່ຈະໄດ້ຮັບຍັງບໍ່ທັນມາເຖິງເທື່ອ—ຂ້າພະເຈົ້າບໍ່ຄວນເອົາໃຫ້ຄົນໃດເບິ່ງ; ທັງແຜ່ນປົກເອິກກັບອຸລິມ ແລະ ທຸມມິມ ນັ້ນຄືກັນ; ນອກຈາກກັບຄົນທີ່ຂ້າພະເຈົ້າຈະໄດ້ຮັບບັນຊາໃຫ້ເຮັດເທົ່ານັ້ນ; ຖ້າຫາກວ່າຂ້າພະເຈົ້າຂືນເຮັດ ຂ້າພະເຈົ້າກໍຈະຖືກທຳລາຍ. ຂະນະທີ່ເພິ່ນເວົ້າກັບຂ້າພະເຈົ້າກ່ຽວກັບແຜ່ນຈາລຶກຢູ່ນັ້ນ, ພາບກໍບັງເກີດຂຶ້ນໃນຄວາມນຶກຄິດຂອງຂ້າພະເຈົ້າ ຈົນຫລຽວເຫັນສະຖານທີ່ ບ່ອນແຜ່ນຈາລຶກຖືກຝັງໄວ້, ແລະ ເຫັນຢ່າງແຈ່ມແຈ້ງ ແລະ ຊັດເຈນດີຈົນວ່າ ຂ້າພະເຈົ້າຮູ້ຈັກບ່ອນນັ້ນທັນທີ ເມື່ອເວລາໄປເຖິງ.

"ຫລັງຈາກສົນທະນາກັນແລ້ວ, ຂ້າພະເຈົ້າໄດ້ເຫັນແສງສະຫວ່າງໃນຫ້ອງເລີ່ມລວມຕົວກັນເຂົ້າມາຮອບໆ ໃກ້ຕົວຂອງຜູ້ທີ່ກ່າວກັບຂ້າພະເຈົ້າ, ແລະ ຄົງເປັນຢູ່ຕໍ່ໄປແນວນັ້ນຈົນວ່າຫ້ອງມືດລົງອີກ, ນອກຈາກທີ່ຢູ່ຮອບຕົວຂອງເພິ່ນ; ໃນທັນໃດນັ້ນ, ຂ້າພະເຈົ້າໄດ້ເຫັນ, ຄືກັບວ່າ ເປັນທາງຂຶ້ນໄປສູ່ສະຫວັນ, ແລະ ເພິ່ນໄດ້ກັບຂຶ້ນໄປຈົນລັບສາຍຕາ, ແລະ ຫ້ອງກໍກັບຄືນສູ່ສະພາບເດີມເໝືອນກ່ອນທີ່ແສງສະຫວ່າງຈາກສະຫວັນມາປະກົດ.

"ຂ້າພະເຈົ້າໄດ້ນອນຄິດເຖິງສິ່ງແປກປະຫລາດຂອງເຫດການນີ້, ແລະ ປະຫລາດໃຈຫລາຍໃນເລື່ອງທີ່ທູດພິເສດຜູ້ນີ້ໄດ້ບອກກັບຂ້າພະເຈົ້າ; ຂະນະທີ່ກຳລັງໃຊ້ຄວາມຄິດຢູ່, ທັນໃດນັ້ນຂ້າພະເຈົ້າໄດ້ເຫັນຫ້ອງຂອງຂ້າພະເຈົ້າເລີ່ມສະຫວ່າງຂຶ້ນອີກ, ແລະ ໃນທັນໃດນັ້ນ, ຄືກັບວ່າ ທູດສະຫວັນຜູ້ເກົ່າ ກໍໄດ້ມາຢືນຢູ່ຂ້າງຕຽງນອນຂອງຂ້າພະເຈົ້າອີກ.

"ເພິ່ນໄດ້ເລີ່ມຕົ້ນ, ແລະ ເລົ່າເຖິງເລື່ອງດຽວກັນນັ້ນ ຊຶ່ງເພິ່ນໄດ້ເຮັດ ຕອນເພິ່ນມາຢ້ຽມຢາມເທື່ອກ່ອນ, ໂດຍບໍ່ຜິດພ້ຽນຈັກໜ້ອຍເລີຍ; ຊຶ່ງເມື່ອເລົ່າຈົບແລ້ວ, ເພິ່ນໄດ້ບອກຂ້າພະເຈົ້າເຖິງການພິພາກສາອັນຍິ່ງໃຫຍ່ ທີ່ກຳລັງຈະມາສູ່ໂລກນີ້, ພ້ອມດ້ວຍການເຮັດໃຫ້ເປົ່າປ່ຽວຢ່າງໃຫຍ່ຫລວງດ້ວຍຄວາມອຶດຢາກ, ດ້ວຍດາບ, ແລະ ດ້ວຍພະຍາດໂລຄາ; ແລະ ວ່າການພິພາກສາອັນໜ້າເສົ້າສະຫລົດໃຈຈະມາສູ່ໂລກກັບຄົນລຸ້ນນີ້. ເມື່ອເລົ່າເລື່ອງນີ້ແລ້ວ, ເພິ່ນກໍໄດ້ກັບຂຶ້ນໄປສະຫວັນອີກຄືກັນກັບເທື່ອກ່ອນ.

"ໃນເວລານັ້ນ, ຄວາມຮູ້ສຶກທີ່ເກີດຂຶ້ນໃນຄວາມນຶກຄິດຂອງຂ້າພະເຈົ້ານັ້ນ ເລິກຊຶ້ງຫລາຍຈົນບໍ່ອາດຈະຫລັບໄດ້ ແລະ ນອນຢູ່ໃນຄວາມປະຫລາດໃຈຢ່າງຖ້ວມລົ້ນ ເຖິງສິ່ງທີ່ຂ້າພະເຈົ້າໄດ້ເຫັນ ແລະ ໄດ້ຍິນ. ແຕ່ຂ້າພະເຈົ້າປະຫລາດໃຈຫລາຍເມື່ອເຫັນທູດຜູ້ດຽວກັນນັ້ນ ມາຢືນຢູ່ຂ້າງຕຽງນອນຂອງຂ້າພະເຈົ້າອີກ, ແລະ ໄດ້ຍິນເພິ່ນກ່າວທວນຄືນ ຫລື ກ່າວຊ້ຳຄຳເກົ່າ ໃຫ້ຂ້າພະເຈົ້າຟັງອີກ ເຖິງເລື່ອງດຽວກັນກັບເທື່ອກ່ອນ; ແລະ ຍັງເຕືອນຂ້າພະເຈົ້າວ່າ ຊາຕານຈະພະຍາຍາມລໍ້ລວງຂ້າພະເຈົ້າ (ເນື່ອງຈາກສະພາບຄວາມຍາກຈົນຂອງຄອບຄົວຂອງພໍ່ຂອງຂ້າພະເຈົ້າ), ໃຫ້ເອົາແຜ່ນຈາລຶກໄປ ເພື່ອຈຸດປະສົງທີ່ຈະສ້າງຄວາມຮັ່ງມີ. ເລື່ອງນີ້ເພິ່ນຫ້າມຂ້າພະເຈົ້າໂດຍກ່າວວ່າ ຂ້າພະເຈົ້າຈະຕ້ອງບໍ່ມີຈຸດປະສົງຢ່າງອື່ນ ໃນການໄດ້ແຜ່ນຈາລຶກນັ້ນມາ ນອກຈາກເພື່ອຖວາຍບາລະມີແດ່ພຣະເຈົ້າເທົ່ານັ້ນ, ແລະ ຕ້ອງບໍ່ຕົກຢູ່ໃນອິດທິພົນຂອງຄວາມມຸ້ງໝາຍອື່ນໃດ ນອກຈາກເພື່ອການສ້າງອານາຈັກຂອງພຣະອົງ; ຖ້າບໍ່ດັ່ງນັ້ນ ຂ້າພະເຈົ້າຈະເອົາແຜ່ນຈາລຶກມາບໍ່ໄດ້.

"ຫລັງຈາກການມາຢ້ຽມຢາມເທື່ອທີສາມນີ້, ເພິ່ນກໍກັບຂຶ້ນສູ່ສະຫວັນຄືກັນກັບເທື່ອກ່ອນ, ແລະ ຂ້າພະເຈົ້າຄິດເຖິງຄວາມແປກປະຫລາດນຳສິ່ງທີ່ຂ້າພະເຈົ້າຫາກໍໄດ້ປະສົບມາ; ເກືອບໃນທັນທີ ຫລັງຈາກທູດສະຫວັນໄດ້ໄປຈາກຂ້າພະເຈົ້າເທື່ອທີສາມ, ໄກ່ກໍຂັນ ແລະ ຂ້າພະເຈົ້າຮູ້ວ່າ ມັນໃກ້ຈະເປັນມື້ໃໝ່ແລ້ວ. ດັ່ງນັ້ນ ການສົນທະນາຂອງພວກເຮົາແມ່ນໃຊ້ເວລາຕະຫລອດທັງຄືນເລີຍ.

"ບໍ່ດົນຫລັງຈາກນັ້ນ ຂ້າພະເຈົ້າໄດ້ລຸກຂຶ້ນຈາກຕຽງນອນຂອງຂ້າພະເຈົ້າ, ແລະ ອອກໄປເຮັດວຽກຕາມປົກກະຕິ, ແຕ່ເມື່ອຂ້າພະເຈົ້າພະຍາຍາມເຮັດວຽກຄືກັນກັບມື້ອື່ນໆ, ຂ້າພະເຈົ້າພົບວ່າໝົດກຳລັງຈົນເຮັດຕໍ່ໄປບໍ່ໄຫວ. ພໍ່ຂອງຂ້າພະເຈົ້າທີ່ກຳລັງເຮັດວຽກຢູ່ກັບຂ້າພະເຈົ້າເຫັນວ່າ ມີອັນໃດອັນໜຶ່ງຜິດປົກກະຕິກັບຂ້າພະເຈົ້າ, ຈຶ່ງບອກໃຫ້ຂ້າພະເຈົ້າກັບບ້ານ. ຂ້າພະເຈົ້າອອກໄປດ້ວຍຄວາມຕັ້ງໃຈທີ່ຈະກັບບ້ານ; ແຕ່ເວລາທີ່ພະຍາຍາມຂ້າມຮົ້ວອອກຈາກໄຮ່ທີ່ພວກເຮົາຢູ່, ຂ້າພະເຈົ້າກໍໝົດແຮງ, ແລະ ລົ້ມລົງແຜ່ຢູ່ກັບພື້ນດິນ, ແລະ ໝົດສະຕິໄປຊົ່ວໄລຍະໜຶ່ງ.

"ສິ່ງທຳອິດທີ່ຈື່ໄດ້ຄືສຽງທີ່ກ່າວກັບຂ້າພະເຈົ້າ ແລະ ເອີ້ນຊື່ຂອງຂ້າພະເຈົ້າ. ຂ້າພະເຈົ້າໄດ້ຫລຽວຂຶ້ນ, ແລະ ເຫັນທູດຜູ້ເກົ່ານັ້ນຢືນຢູ່ຊື່ຫົວຂອງຂ້າພະເຈົ້າ, ມີແສງສະຫວ່າງຢູ່ອ້ອມຮອບ ຄືກັນກັບເທື່ອກ່ອນ. ແລ້ວເພິ່ນໄດ້ເວົ້າເລື່ອງທັງໝົດ ທີ່ໄດ້ເລົ່າໃຫ້ຂ້າພະເຈົ້າຟັງ ເມື່ອມື້ຄືນນີ້ອີກ, ແລະ ສັ່ງໃຫ້ຂ້າພະເຈົ້າກັບຄືນໄປຫາພໍ່ຂອງຂ້າພະເຈົ້າ ແລະ ບອກເພິ່ນກ່ຽວກັບພາບ ແລະ ຄຳສັ່ງທີ່ຂ້າພະເຈົ້າໄດ້ຮັບ.

"ຂ້າພະເຈົ້າໄດ້ເຮັດຕາມ; ຂ້າພະເຈົ້າໄດ້ກັບໄປຫາພໍ່ໃນໄຮ່, ແລະ ເລົ່າເລື່ອງທັງໝົດໃຫ້ເພິ່ນຟັງ. ເພິ່ນຕອບຂ້າພະເຈົ້າວ່າ ມັນເປັນເລື່ອງຂອງພຣະເຈົ້າ, ແລະ ບອກໃຫ້ຂ້າພະເຈົ້າໄປເຮັດຕາມສິ່ງທີ່ທູດສັ່ງ. ຂ້າພະເຈົ້າຈຶ່ງອອກຈາກໄຮ່, ແລະ ໄປຫາບ່ອນທີ່ທູດບອກຂ້າພະເຈົ້າວ່າມີແຜ່ນຈາລຶກຝັງຢູ່; ແລະ ເພາະເນື່ອງຈາກຄວາມແຈ່ມແຈ້ງຂອງພາບທີ່ຂ້າພະເຈົ້າໄດ້ຮັບກ່ຽວກັບບ່ອນນັ້ນ, ຂ້າພະເຈົ້າຈຶ່ງຮູ້ຈັກບ່ອນນັ້ນທັນທີ ເມື່ອຂ້າພະເຈົ້າໄປເຖິງ.

"ໃກ້ໝູ່ບ້ານແມນເຈດສະເຕີ, ເຂດອອນແທຣິໂອ, ລັດນິວຢອກ, ມີພູຂະໜາດໃຫຍ່ໜ່ອຍໜຶ່ງ ແລະ ສູງກວ່າພູໜ່ອຍອື່ນໆທີ່ຢູ່ໃກ້ຄຽງ. ທາງດ້ານຕາເວັນຕົກຂອງພູໜ່ອຍນີ້, ບໍ່ໄກຈາກຈອມພູຫລາຍປານໃດ, ຢູ່ກ້ອງກ້ອນຫີນຂະໜາດໃຫຍ່ກ້ອນໜຶ່ງ, ມີແຜ່ນຈາລຶກວາງຢູ່, ໃນຫີບທີ່ເປັນຫີນ. ຫີນກ້ອນນີ້ໜາ ແລະ ທາງກາງຂອງຫີນນີ້ໂຄ້ງ ແລະ ລາດລົງໄປຫາຂອບ, ຈົນຫລຽວເຫັນທາງກາງຂອງມັນໄດ້ຈາກໜ້າດິນ, ແຕ່ດິນປິດຮອບຂອບໄວ້ທັງໝົດ.

"ເມື່ອຂຸດດິນອອກແລ້ວ, ຂ້າພະເຈົ້າໄດ້ຫາໄມ້ລຳໜຶ່ງ, ຊຶ່ງຂ້າພະເຈົ້າໄດ້ສອດມັນລົງກ້ອງຂອບຫີນ, ແລະ ດ້ວຍການອອກແຮງພຽງເລັກໜ້ອຍ ກໍງັດມັນຂຶ້ນໄດ້. ຂ້າພະເຈົ້າຫລຽວເຂົ້າໄປໃນບ່ອນນັ້ນ, ແລ້ວຂ້າພະເຈົ້າກໍໄດ້ເຫັນແຜ່ນຈາລຶກ, ອຸລີມ ແລະ ທຸມມີມ, ແລະ ແຜ່ນປົກເອິກ, ຕາມທີ່ທູດບອກໄວ້. ຫີບທີ່ມີຂອງເຫລົ່ານີ້ເຮັດຂຶ້ນໂດຍການວາງຫີນລຽນໄວ້ໃນຊີມັງຊະນິດໜຶ່ງ. ຢູ່ກົ້ນຫີບມີຫີນຢູ່ສອງກ້ອນ ວາງຢູ່ທາງຂວາງຂອງຫີບ, ແລະ ແຜ່ນຈາລຶກກັບສິ່ງຂອງອື່ນໆຊຶ່ງຢູ່ນຳກັນ ວາງຢູ່ເທິງຫີນສອງກ້ອນນີ້.

"ຂ້າພະເຈົ້າພະຍາຍາມເອົາມັນອອກມາ, ແຕ່ທູດໄດ້ຫ້າມໄວ້, ແລະ ບອກອີກວ່າ ຍັງບໍ່ທັນເຖິງເວລາທີ່ຈະນຳມັນອອກມາ, ຈົນກວ່າເວລາອີກສີ່ປີນັບແຕ່ເວລານັ້ນເປັນຕົ້ນໄປ;

ແຕ່ເພິ່ນບອກຂ້າພະເຈົ້າອີກວ່າ ຂ້າພະເຈົ້າຈະຕ້ອງມາບ່ອນນັ້ນ ເມື່ອເຖິງວັນຄົບຮອບແຕ່ລະປີ, ແລະ ວ່າເພິ່ນຈະມາພົບກັບຂ້າພະເຈົ້າຢູ່ບ່ອນນັ້ນ, ແລະ ວ່າຂ້າພະເຈົ້າຈະຕ້ອງເຮັດແນວນັ້ນໄປຈົນກວ່າຈະເຖິງເວລາທີ່ຈະໄດ້ຮັບແຜ່ນຈາລຶກ.

"ຕາມນັ້ນ, ຂ້າພະເຈົ້າຈຶ່ງໄປເມື່ອຄົບກຳນົດທຸກປີຕາມທີ່ໄດ້ຮັບຄຳສັ່ງ, ແລະ ແຕ່ລະເທື່ອຂ້າພະເຈົ້າໄດ້ພົບທູດອົງເກົ່າ ຢູ່ບ່ອນນັ້ນ, ແລະ ໄດ້ຮັບຄຳແນະນຳ ແລະ ຄວາມຮູ້ແຈ້ງຈາກເພິ່ນທຸກໆເທື່ອ, ສົນທະນາກັນກ່ຽວກັບສິ່ງທີ່ພຣະຜູ້ເປັນເຈົ້າຈະກະທຳ, ແລະ ກ່ຽວກັບອານາຈັກຂອງພຣະອົງຈະດຳເນີນໄປແນວໃດ ແລະ ໂດຍວິທີໃດໃນຍຸກສຸດທ້າຍ. . . .

"ໃນທີ່ສຸດກໍເຖິງເວລາທີ່ຈະໄດ້ຮັບແຜ່ນຈາລຶກ, ອຸລິມ ແລະ ທຸມມີມ, ແລະ ແຜ່ນປົກເອິກ. ໃນວັນທີຊາວສອງ, ເດືອນກັນຍາ, ໜຶ່ງພັນແປດຮ້ອຍຊາວເຈັດ, ໂດຍທີ່ໄດ້ໄປຫາບ່ອນຝັງຂອງເຫລົ່ານັ້ນຕາມປົກກະຕິເມື່ອຄົບຮອບໜຶ່ງປີ, ທູດສະຫວັນອົງດຽວກັນນີ້ກໍໄດ້ມອບຂອງເຫລົ່ານັ້ນໃຫ້ແກ່ຂ້າພະເຈົ້າ ພ້ອມກັບຂໍ້ຜູກມັດດັ່ງນີ້ວ່າ: ຂ້າພະເຈົ້າຈະຕ້ອງຮັບຜິດຊອບຕໍ່ຂອງເຫລົ່ານີ້ ຖ້າຫາກວ່າຂ້າພະເຈົ້າປະປ່ອຍມັນໄປໂດຍຄວາມປະໝາດ ຫລືໂດຍການລະເລີຍປະການໃດ, ຂ້າພະເຈົ້າຈະຖືກຕັດອອກ; ແຕ່ຖ້າຫາກວ່າຂ້າພະເຈົ້າຈະໃຊ້ຄວາມພະຍາຍາມທັງໝົດທີ່ຈະຮັກສາມັນໄວ້, ຈົນກວ່າເພິ່ນຜູ້ເປັນທູດຈະເອີ້ນເອົາມັນຄືນ, ແລ້ວຂອງເຫລົ່ານີ້ຈະໄດ້ຮັບການຄຸ້ມຄອງ.

"ໃນບໍ່ຊ້າຂ້າພະເຈົ້າກໍເຂົ້າໃຈເຫດຜົນທີ່ຂ້າພະເຈົ້າໄດ້ຮັບພາລະອັນເຂັ້ມງວດໃຫ້ຮັກສາຂອງເຫລົ່ານີ້ໄວ້ໃຫ້ປອດໄພ, ແລະ ສິ່ງທີ່ທູດໄດ້ເວົ້າໄວ້ວ່າ ເມື່ອຂ້າພະເຈົ້າໄດ້ເຮັດສິ່ງທີ່ເພິ່ນຕ້ອງການໃຫ້ຂ້າພະເຈົ້າເຮັດແລ້ວ, ເພິ່ນຈະເອົາຂອງເຫລົ່ານັ້ນຄືນໄປ. ທັນທີທີ່ຄົນຮູ້ວ່າ ຂ້າພະເຈົ້າໄດ້ຮັບຂອງເຫລົ່ານັ້ນມາ, ຜູ້ຄົນກໍໃຊ້ຄວາມພະຍາຍາມຢ່າງໜັກເພື່ອຈະເອົາມັນໄປຈາກຂ້າພະເຈົ້າ. ກົນອຸບາຍທຸກຢ່າງທີ່ຄິດຂຶ້ນມາໄດ້ ກໍຈະເຮັດເພື່ອເຈດຕະນານັ້ນ. ການຂົ່ມເຫັງນັບມື້ນັບຮຸນແຮງຂຶ້ນກວ່າເກົ່າ, ແລະ ຜູ້ຄົນເຝົ້າຄອຍຢູ່ຕະຫລອດເວລາເພື່ອຈະເອົາມັນໄປ. ແຕ່ໂດຍຄວາມສະຫລຽວສະຫລາດຂອງພຣະເຈົ້າ, ຂອງເຫລົ່ານີ້ຈຶ່ງຢູ່ໃນກຳມືຂອງຂ້າພະເຈົ້າຢ່າງປອດໄພ. ຈົນກວ່າຂ້າພະເຈົ້າໃຊ້ຂອງເຫລົ່ານີ້ເຮັດໃຫ້ພາລະທີ່ຕ້ອງການໃຫ້ຂ້າພະເຈົ້າເຮັດສຳເລັດຕາມທີ່ຕົກລົງກັນໄວ້. ເມື່ອທູດເອີ້ນເອົາມັນຄືນ, ຂ້າພະເຈົ້າກໍສົ່ງຂອງເຫລົ່ານີ້ຄືນໃຫ້ເພິ່ນ; ແລະ ເພິ່ນມີຂອງເຫລົ່ານີ້ຢູ່ໃນຄວາມອາລັກຂາຂອງເພິ່ນ; ຈົນເຖິງມື້ນີ້, ຄືວັນທີສອງຂອງເດືອນ ພຶດສະພາ, ໜຶ່ງພັນແປດຮ້ອຍສາມສິບແປດ."

ສຳລັບບັນທຶກຢ່າງຄົບຖ້ວນ, ເບິ່ງ ໂຈເຊັບ ສະມິດ—ປະຫວັດ ໃນ ໄຂ່ມຸກອັນລ້ຳຄ່າ.

ບັນທຶກທີ່ເກົ່າແກ່ ຊຶ່ງນຳອອກມາຈາກພື້ນດິນດັ່ງສຽງຂອງຜູ່ງຊົນເວົ້າອອກມາຈາກພື້ນດິນ ແລະ ແປອອກມາເປັນພາສາອັງກິດໂດຍຂອງປະທານ ແລະ ອຳນາດຂອງພຣະເຈົ້າທີ່ພິສູດໄດ້ໂດຍການຢືນຢັນຈາກພຣະເຈົ້າ ຈຶ່ງໄດ້ຈັດພິມອອກມາສູ່ໂລກເປັນຄັ້ງທຳອິດໃນປີ 1830 ຄື The Book of Mormon.

# ບົດວິເຄາະໂດຍຫຍໍ້ກ່ຽວກັບພຣະຄຳພີມໍມອນ

ພຣະຄຳພີມໍມອນເປັນບັນທຶກທີ່ສັກສິດຂອງຊາວອາເມຣິກາສະໄໝບູຮານ ແລະ ໄດ້ບັນທຶກໄວ້ໃນແຜ່ນໂລຫະຕ່າງໆ. ບັນທຶກເຫລົ່ານີ້ໄດ້ຖືກຫຍໍ້ມາຈາກ ແຫລ່ງດັ່ງຕໍ່ໄປນີ້:

1. *ແຜ່ນຈາລຶກຂອງນີ*ໄຟ ຊຶ່ງມີຢູ່ສອງແບບ. ແຜ່ນຈາລຶກນ້ອຍກັບແຜ່ນຈາລຶກໃຫຍ່. ແບບທຳອິດແມ່ນເຈາະຈົງໃສ່ສິ່ງສັກສິດ ແລະ ການຮັບໃຊ້ ແລະ ການສິດສອນຂອງສາດສະດາທັງຫລາຍ, ຊຶ່ງສ່ວນຖັດກັນໄປນັ້ນແມ່ນເຕັມໄປດ້ວຍປະຫວັດສາດຂອງຝູງຊົນທີ່ກ່ຽວຂ້ອງ (1 ນີໄຟ 9:2–4). ເຖິງຢ່າງໃດກໍຕາມ, ຫລັງຈາກວັນເວລາຂອງໂມໄຊຢາ, ແຜ່ນຈາລຶກໃຫຍ່ໄດ້ມີຂໍ້ຄວາມອັນສັກສິດຮ່ວມຢູ່ດ້ວຍ.

2. *ແຜ່ນຈາລຶກຂອງ*ມໍມອນ ຊຶ່ງມີຂໍ້ຄວາມຫຍໍ້ມາຈາກແຜ່ນຈາລຶກໃຫຍ່ຂອງນີໄຟ, ຈັດຂຶ້ນໂດຍມໍມອນ ມີຄຳອະທິບາຍຫລາຍຢ່າງ. ແຜ່ນຈາລຶກເຫລົ້ມນີ້ໄດ້ບັນຈຸປະຫວັດສາດສະໄໝຕໍ່ມາທີ່ເພິ່ນຂຽນໄວ້ ລວມທັງຂໍ້ຄວາມເພີ່ມເຕີມໂດຍໂມໂຣໄນຜູ້ເປັນລູກຊາຍຂອງມໍມອນ.

3. *ແຜ່ນຈາລຶກຂອງ*ອີເທີ ຊຶ່ງເປັນປະຫວັດສາດຂອງຊາວຢາເຣັດ. ການບັນທຶກສ່ວນນີ້ຖືກຫຍໍ້ໂດຍໂມໂຣໄນ, ຜູ້ຊຶ່ງໄດ້ເພີ່ມເຕີມເນື້ອຄວາມອະທິບາຍຂອງຕົນເອງໃສ່ໃນນັ້ນ ແລະ ໄດ້ຮວມບັນທຶກໄວ້ໃນຫົວຂໍ້ຂອງ "ໜັງສືອີເທີ."

4. *ແຜ່ນຈາລຶກທອງເຫລືອງ* ທີ່ໄດ້ນຳມາໂດຍຜູ້ຄົນຂອງລີໄຮ ຊຶ່ງອອກຈາກເຢຣູຊາເລັມ 600 ປີ ກ່ອນຄຣິສຕະສັກກະລາດ. ແຜ່ນຈາລຶກນີ້ໄດ້ບັນທຶກ "ໜັງສືຫ້າເຫລັ້ມຂອງໂມເຊ, . . . ແລະ ພ້ອມດ້ວຍບັນທຶກຂອງຊາວຢິວຕັ້ງແຕ່ຕົ້ນ, . . . ລົງມາເຖິງການເລີ່ມຕົ້ນຂອງການປົກຄອງຂອງເຊເດກີຢາ ກະສັດຂອງຊາວຢູດາ ແລະ ຄຳທຳນາຍຂອງສາດສະດາຜູ້ສັກສິດ" (1 ນີໄຟ 5:11–13). ໄດ້ມີຄຳກ່າວອ້າງມາຈາກແຜ່ນຈາລຶກເຫລົ່ານີ້, ກ່າວອ້າງຄຳຂອງເອຊາຢາ ແລະ ສາດສະດາຜູ້ທີ່ຢູ່ໃນພຣະຄຳພີ ຫລື ບໍ່ໄດ້ຢູ່ໃນພຣະຄຳພີ ໄດ້ປະກົດຢູ່ໃນພຣະຄຳພີມໍມອນ.

ພຣະຄຳພີມໍມອນປະກອບດ້ວຍພາກໃຫຍ່ ສິບຫ້າ ພາກ ຫລື ໝວດ ຍົກເວັ້ນພາກດຽວຊຶ່ງເອີ້ນກັນວ່າ ໜັງສື, ຕາມທຳມະດາແລ້ວ ຈະເປັນຕາມຊື່ຂອງຜູ້ຂຽນເລື່ອງເປັນສ່ວນໃຫຍ່. ພາກສ່ວນທຳອິດ (ໜັງສື ທົກສະບັບທຳອິດສິ້ນສຸດດ້ວຍອອມໄນ) ແມ່ນການແປຈາກແຜ່ນຈາລຶກນ້ອຍຂອງນີໄຟ. ຄຳຂອງມໍມອນໄດ້ຖືກສອດໃສ່ຂັ້ນກາງໜັງສືອອມໄນກັບໜັງສືໂມໄຊຢາເພື່ອຄຳຂອງມໍມອນຈະໄດ້ຕໍ່ບັນທຶກໃນແຜ່ນຈາລຶກນ້ອຍເຂົ້າກັບການຫຍໍ້ຂອງມໍມອນ ທີ່ເອົາມາຈາກແຜ່ນຈາລຶກໃຫຍ່.

ພາກທີ່ຍາວທີ່ສຸດແມ່ນເລີ່ມຕັ້ງແຕ່ໂມໄຊຢາຈົນເຖິງມໍມອນ ບົດທີ 7 ລວມທັງການແປຄວາມຫຍໍ້ຂອງມໍມອນ ຈາກແຜ່ນຈາລຶກໃຫຍ່ຂອງນີໄຟ. ພາກສະຫລຸບ ຈາກມໍມອນ ບົດທີ 8 ໄປຈົນຈົບເຫລັ້ມແມ່ນໂມໂຣໄນ ຜູ້ເປັນລູກຊາຍຂອງມໍມອນໄດ້ຈາລຶກໄວ້ຫລັງຈາກສິ້ນສຸດການບັນທຶກຊີວະປະຫວັດຂອງບິດາຂອງເພິ່ນ. ແລ້ວໄດ້ເຮັດຄວາມຫຍໍ້ຂອງບັນທຶກ

ຂອງຊາວຢາເຣັດໄວ້ (ເປັນໜັງສືອີເທີ). ຕໍ່ມາເພິ່ນໄດ້ເພີ່ມເຕີມພາກທີ່ຮູ້ຈັກກັນວ່າ ໜັງສືໂມໂຣໄນ.

ໃນ ຫລື ປະມານ ຄ.ສ. 421, ໂມໂຣໄນ, ຜູ້ເປັນສາດສະດາ-ນັກປະຫວັດສາດຂອງຊາວນີໄຟຄົນສຸດທ້າຍໄດ້ຜະນຶກບັນທຶກອັນສັກສິດນັ້ນ ແລະ ໄດ້ເຊື່ອງມັນໄວ້ກັບພຣະຜູ້ເປັນເຈົ້າ ເພື່ອຈະໄດ້ນຳອອກມາໃນຍຸກສຸດທ້າຍ, ດັ່ງທີ່ທຳນາຍໄວ້ໂດຍສຸລະສຽງຂອງພຣະເຈົ້າຜ່ານສາດສະດາສະໄໝບູຮານຂອງພຣະອົງ. ໃນ ຄ.ສ. 1823, ໂມໂຣໄນຜູ້ດຽວກັນນີ້ ຜູ້ທີ່ຟື້ນຄືນຊີວິດແລ້ວ, ໄດ້ມາຢ້ຽມຢາມສາດສະດາໂຈເຊັບ ສະມິດ ແລ້ວມອບແຜ່ນຈາລຶກ ຊຶ່ງມີອັກຂະລະໃຫ້ເພິ່ນ.

*ກ່ຽວກັບສະບັບນີ້:* ໜ້າວິເຄາະຕົ້ນສະບັບ, ຢູ່ກ່ອນໜ້າສາລະບານ, ຖືກຍົກເອົາມາຈາກແຜ່ນຈາລຶກ ແລະ ເປັນຂໍ້ຄວາມສ່ວນໜຶ່ງທີ່ສັກສິດ. ຄຳນຳທີ່ບໍ່ໄດ້ເປັນຕົວເນີ້ງ, ດັ່ງເຊັ່ນຢູ່ໃນ 1 ນີໄຟ ແລະ ຢູ່ກ່ອນໜ້າ ໂມໄຊຢາ ບົດທີ 9, ກໍເປັນຂໍ້ຄວາມສ່ວນໜຶ່ງທີ່ສັກສິດຄືກັນ. ຄຳນຳທີ່ເປັນຕົວເນີ້ງ, ດັ່ງເຊັ່ນໃນຫົວຂໍ້ບົດ, ບໍ່ແມ່ນຂໍ້ຄວາມຈາກສະບັບຕົ້ນ ແຕ່ຊ່ວຍໃນການສຶກສາ ລວມທັງເພື່ອຄວາມສະດວກໃນການອ່ານ.

ຄວາມຜິດພາດເລັກໜ້ອຍທີ່ມີຢູ່ໃນປຶ້ມຖືກເກັບໄວ້ສະເໝີມາໃນພຣະຄຳພີມໍມອນສະບັບທີ່ໄດ້ພິມຜ່ານມາເປັນພາສາອັງກິດ. ສະບັບນີ້ບັນຈຸການດັດແປງທີ່ເໝາະສົມ ເພື່ອເຮັດໃຫ້ເນື້ອຫາສອດຄ່ອງກັບຕົ້ນສະບັບກ່ອນການຈັດພິມ ແລະ ກັບການພິມຊຸດທຳອິດຊຶ່ງຮຽບຮຽງໂດຍສາດສະດາໂຈເຊັບ ສະມິດ.

# ໜັງສືນີໄຟສະບັບທີໜຶ່ງ

**ການປົກຄອງ ແລະ ການປະຕິບັດສາດສະໜາກິດຂອງເພິ່ນ**

ເລື່ອງລາວຂອງລີໄຮ ແລະ ຊາໄຣຢາ ພັນລະຍາຂອງເພິ່ນພ້ອມດ້ວຍລູກຊາຍສີ່ຄົນ ທີ່ມີຊື່ວ່າ (ເລີ່ມຕັ້ງແຕ່ລູກກົກ) ເລມັນ, ເລມູເອນ, ແຊມ, ແລະ ນີໄຟ. ພຣະຜູ້ເປັນເຈົ້າໄດ້ເຕືອນລີໄຮໃຫ້ອອກຈາກແຜ່ນດິນເຢຣູຊາເລັມເພາະເພິ່ນທຳນາຍແກ່ຜູ້ຄົນກ່ຽວກັບຄວາມຊົ່ວຮ້າຍຂອງພວກເຂົາ ແລະ ພວກເຂົາພະຍາຍາມທຳລາຍຊີວິດຂອງເພິ່ນ. ເພິ່ນເດີນທາງສາມວັນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານກັບຄອບຄົວຂອງເພິ່ນ. ນີໄຟພາພວກອ້າຍກັບໄປແຜ່ນດິນເຢຣູຊາເລັມເພື່ອຕາມເອົາບັນທຶກຂອງຊາວຢິວ. ເລື່ອງລາວກ່ຽວກັບຄວາມທຸກທໍລະມານຂອງເຂົາເຈົ້າ. ເຂົາເຈົ້າໄດ້ລູກສາວຂອງອິດຊະມາເອນມາເປັນເມຍ. ເຂົາເຈົ້າພາຄອບຄົວອອກໄປໃນຖິ່ນແຫ້ງແລ້ງກັນດານ. ຄວາມທຸກທໍລະມານ ແລະ ຄວາມທຸກຂອງເຂົາເຈົ້າໃນຖິ່ນແຫ້ງແລ້ງກັນດານ. ການເດີນທາງຂອງເຂົາເຈົ້າ. ເຂົາເຈົ້າມາເຖິງຜືນນ້ຳອັນກວ້າງໃຫຍ່. ພວກອ້າຍຂອງນີໄຟກະບົດຕໍ່ລາວ. ລາວເຮັດໃຫ້ພວກເຂົາຍອມຈຳນົນ ແລະ ສ້າງເຮືອລຳໜຶ່ງ. ເຂົາເຈົ້າເອີ້ນບ່ອນນັ້ນວ່າ ອຸດົມສົມບູນ. ເຂົາເຈົ້າຂ້າມຜືນນ້ຳອັນກວ້າງໃຫຍ່ໄປສູ່ແຜ່ນດິນແຫ່ງຄຳສັນຍາ ແລະ ອື່ນໆ. ທັງນີ້ເປັນໄປຕາມເລື່ອງລາວຂອງນີໄຟ ຫລື ອີກຄຳໜຶ່ງ ຂ້າພະເຈົ້ານີໄຟເປັນຜູ້ຂຽນບັນທຶກນີ້.

## ບົດທີ 1

*ນີໄຟ ເລີ່ມ ບັນ ທຶກ ກ່ຽວ ກັບ ຜູ້ ຄົນ ຂອງ ລາວ—ລີໄຮເຫັນພາບນິມິດທີ່ເປັນເສົາໄຟ ແລະ ອ່ານຈາກໜັງສືຄຳທຳນາຍ—ເພິ່ນສັນລະເສີນພຣະເຈົ້າ, ບອກລ່ວງໜ້າເຖິງການສະເດັດມາຂອງພຣະເມຊີອາ ແລະ ທຳນາຍເຖິງຄວາມພິນາດທີ່ຈະມາເຖິງເມືອງເຢຣູຊາເລັມ—ເພິ່ນຖືກຊາວຢິວຂົ່ມເຫັງ. ປະມານ 600 ປີ ກ່ອນ ຄ.ສ.*

1 ຂ້າ ພະ ເຈົ້າ [ກ]ນີໄຟ ທີ່ ໄດ້ ເກີດ ຈາກ [ຂ]ບິດາມານດາ [ຄ]ຜູ້ປະເສີດ, ສະນັ້ນຂ້າພະເຈົ້າຈຶ່ງໄດ້ຮັບການ [ງ]ສິດສອນມາແດ່ແລ້ວໃນສິ່ງທີ່ຮຽນຮູ້ທັງໝົດຂອງບິດາຂອງຂ້າພະເຈົ້າ ແລະ ໂດຍທີ່ເຫັນ [ຈ]ຄວາມທຸກຫລາຍຢ່າງໃນວັນເວລາຂອງຂ້າພະເຈົ້າເຖິງຢ່າງໃດກໍຕາມ ໂດຍເປັນທີ່ໂປດປານຂອງພຣະຜູ້ເປັນເຈົ້າຕະຫລອດວັນເວລາຂອງຂ້າພະເຈົ້າ, ແທ້ຈິງແລ້ວ, ໂດຍທີ່ມີຄວາມຮູ້ຢ່າງໃຫຍ່ຫລວງເຖິງພຣະກະລຸນາທິຄຸນ ແລະ [ສ]ຄວາມລຶກລັບຂອງພຣະເຈົ້າ, ສະນັ້ນ ຂ້າພະເຈົ້າຈຶ່ງເຮັດ [ຊ]ບັນທຶກກ່ຽວກັບການປະຕິບັດງານຂອງຂ້າພະເຈົ້າໃນວັນເວລາຂອງຂ້າພະເຈົ້າ.

2 ແທ້ຈິງແລ້ວ, ຂ້າພະເຈົ້າເຮັດບັນທຶກເປັນ [ກ]ພາສາຂອງບິດາຂອງຂ້າພະເຈົ້າຊຶ່ງປະກອບດ້ວຍສິ່ງທີ່ຮຽນຮູ້ຂອງຊາວຢິວ ແລະ ພາສາຂອງຊາວເອຢິບ.

---

**1** 1*ກ* ຄມພ ນີໄຟ, ລູກຊາຍຂອງລີໄຮ.
*ຂ* ຄພ 68:25, 28. ຄມພ ພໍ່ແມ່, ບິດາມານດາ.
*ຄ* ສພສ 22:1.
*ງ* ອນ 1:1; ມຊຢ 1:2–3. ຄມພ ສອນ, ຜູ້ສອນ, ຄູສອນ.
*ຈ* ຄມພ ຍາກລຳບາກ, ຄວາມຍາກລຳບາກ.
*ສ* ຄມພ ຄວາມລຶກລັບຂອງພຣະເຈົ້າ.
*ຊ* ຄມພ ພຣະຄຳພີ.
2*ກ* ມຊຢ 1:2–4; ມມ 9:32–33.

3 ແລະ ຂ້າພະເຈົ້າຮູ້ດີວ່າ ບັນທຶກທີ່ຂ້າພະ
ເຈົ້າກະທຳນັ້ນເປັນ [ກ]ຄວາມຈິງ ເພາະຂ້າພະ
ເຈົ້າ ເຮັດມັນດ້ວຍມືຂອງຂ້າພະເຈົ້າ ແລະ
ເຮັດຕາມຄວາມຮູ້ຂອງຂ້າພະເຈົ້າເອງ.
4 ເພາະ ເຫດການໄດ້ບັງເກີດຂຶ້ນໃນໄລ
ຍະເລີ່ມຕົ້ນປີ [ກ]ທຳອິດຂອງການປົກຄອງ
ຂອງ [ຂ]ເຊເດກີຢາ ກະສັດແຫ່ງຢູດາ (ລີໄຮ
ບິດາຂອງຂ້າພະເຈົ້າຢູ່ໃນ [ຄ]ເຢຣູຊາເລັມ
ຕະຫລອດວັນເວລາຂອງເພິ່ນ) ແລະ ໃນ
ປີດຽວກັນນັ້ນ ໄດ້ມີ [ງ]ສາດສະດາຫລາຍ
ທ່ານມາທຳນາຍຕໍ່ຜູ້ຄົນວ່າ ພວກເຂົາຕ້ອງ
ກັບໃຈ ຖ້າບໍ່ດັ່ງນັ້ນ ມະຫານະຄອນ [ຈ]ເຢຣູ
ຊາເລັມຈະຕ້ອງຖືກທຳລາຍ.
5 ດັ່ງນັ້ນ ເຫດການໄດ້ບັງເກີດຂຶ້ນຄື
[ກ]ລີໄຮບິດາຂອງຂ້າພະເຈົ້າ ເມື່ອເພິ່ນອອກ
ໄປອະທິຖານຫາພຣະຜູ້ເປັນເຈົ້າ, ແທ້ຈິງ
ແລ້ວ, ແມ່ນອ້ອນວອນດ້ວຍສຸດ [ຂ]ໃຈ ເພື່ອ
ຜູ້ຄົນຂອງເພິ່ນ.
6 ແລະ ເຫດການໄດ້ບັງເກີດຂຶ້ນເມື່ອເພິ່ນ
ອະທິຖານຫາພຣະຜູ້ເປັນເຈົ້າຢູ່ນັ້ນ, ມີ [ກ]ເລົາ
ໄຟມາສະຖິດຢູ່ເທິງກ້ອນຫີນຊື່ໜ້າຂອງ
ເພິ່ນ; ແລະ ເພິ່ນກໍໄດ້ເຫັນ ແລະ ໄດ້ຍິນ
ຫລາຍເລື່ອງ; ເພາະສິ່ງທີ່ເພິ່ນເຫັນ ແລະ ໄດ້
ຍິນມານັ້ນ ຈຶ່ງເຮັດໃຫ້ຕົວຂອງເພິ່ນມີຄວາມ
ສະທ້ານຫວັ່ນໄຫວ ແລະ ສັ່ນຢ່າງຍິ່ງ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ກັບມາບ້ານຂອງເພິ່ນເອງ ທີ່ເມືອງເຢຣູ
ຊາເລັມ; ແລະ ໄດ້ລົ້ມຕົວລົງເທິງຕຽງນອນ
ຂອງເພິ່ນຢ່າງ [ກ]ໝົດກຳລັງດ້ວຍພຣະວິນ
ຍານ ແລະ ສິ່ງທີ່ເພິ່ນໄດ້ເຫັນມາ.
8 ແລະ ໂດຍໝົດກຳລັງດ້ວຍພຣະວິນ
ຍານ, ເພິ່ນຈຶ່ງຖືກນຳໄປໃນ [ກ]ພາບນິມິດ,
ຈົນວ່າເພິ່ນເຫັນ [ຂ]ຟ້າສະຫວັນເປີດ, ແລະ
ເພິ່ນຄິດວ່າເພິ່ນເຫັນພຣະເຈົ້າປະທັບຢູ່ທີ່
ພຣະທີ່ນັ່ງ, ຫຸ້ມລ້ອມໄປດ້ວຍເຫລົ່າທູດທັງ
ຫລາຍຈົນນັບບໍ່ຖ້ວນ ຢູ່ໃນທ່າທາງກຳລັງ
ຮ້ອງເພງ ແລະ ສັນລະເສີນພຣະເຈົ້າຂອງ
ພວກເຂົາຢູ່.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເພິ່ນເຫັນຄົນຜູ້ໜຶ່ງລົງມາຈາກທ່າມກາງ
ສະຫວັນ, ແລະ ເພິ່ນເຫັນວ່າ [ກ]ລັດສະໝີ
ພາບຂອງຄົນຜູ້ນັ້ນເໜືອກວ່າລັດສະໝີ
ພາບຂອງດວງອາທິດໃນຕອນທ່ຽງວັນ.
10 ແລະ ເພິ່ນເຫັນຄົນອີກ [ກ]ສິບສອງຄົນ
ຕິດຕາມຜູ້ນັ້ນລົງມານຳກັນ, ແລະ ຄວາມ
ສະຫວ່າງຂອງພວກເຂົາ ເໜືອກວ່າແສງ
ສະຫວ່າງຂອງດວງດາວໃນທ້ອງນະພາ.
11 ແລະ ຄົນເຫລົ່ານັ້ນລົງມາ ແລະ ອອກ
ໄປໃນພື້ນແຜ່ນດິນໂລກ; ແລະ ຜູ້ທຳອິດໄດ້
ມາຢືນຢູ່ຕໍ່ໜ້າບິດາຂອງຂ້າພະເຈົ້າ, ແລະ
ມອບ [ກ]ໜັງສືໃຫ້ແກ່ເພິ່ນເຫລັ້ມໜຶ່ງ, ແລະ
ຂໍໃຫ້ເພິ່ນອ່ານ.

3 *ກ* 1 ນຟ 14:30; ມຊຢ 1:6; ອທ 5:1–3; ຄພ 17:6.
4 *ກ* 598 ປີ ກ່ອນ ຄ.ສ.; ເບິ່ງ ລຳດັບປະຫວັດສາດ ໃນພາກທ້ອຍທ້າຍ.
*ຂ* 2 ຂຄ 36:10; ຢມຢ 52:3–5; ອມນ 1:15.
*ຄ* 1 ຂຄ 9:3.
*ງ* 2 ກສ 17:13–15; 2 ຂຄ 36:15–16; ຢມຢ 7:25–26. ຄມພ ສາດສະດາ.
*ຈ* ຢມຢ 26:18; 2 ນຟ 1:4; ຮລມ 8:20.
5 *ກ* ຄມພ ລີໄຮ, ບິດາຂອງນີໄຟ.
*ຂ* ຢກບ 5:16.
6 *ກ* ອພຍ 13:21; ຮລມ 5:24, 43; ຄພ 29:12; ຈສ—ປ 1:16.
7 *ກ* ດນອ 10:8; 1 ນຟ 17:47; ມຊ 1:9–10; ຈສ—ປ 1:20.
8 *ກ* 1 ນຟ 5:4. ຄມພ ພາບນິມິດ.
*ຂ* ອຊກ 1:1; ກຈກ 7:55–56; 1 ນຟ 11:14; ຮລມ 5:45–49; ຄພ 137:1.
9 *ກ* ຈສ—ປ 1:16–17.
10 *ກ* ຄມພ ອັກຄະສາວົກ.
11 *ກ* ອຊກ 2:9.

12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ເພິ່ນອ່ານໜັງສືແລ້ວ, ເພິ່ນກໍເຕັມໄປດ້ວຍ
[ກ]ພຣະວິນຍານຂອງພຣະຜູ້ເປັນເຈົ້າ.
13 ແລະ ເພິ່ນອ່ານ, ມີຄວາມວ່າ: ວິບັດ,
ວິບັດ ແກ່ ເຢຣູ ຊາ ເລັມ, ເພາະ ເຮົາ ເຫັນ
[ກ]ຄວາມໜ້າກຽດຊັງຂອງເຈົ້າ! ແທ້ຈິງແລ້ວ,
ແລະ ຫລາຍຢ່າງທີ່ບິດາຂອງຂ້າພະເຈົ້າ
ໄດ້ອ່ານມາຫລາຍເລື່ອງກ່ຽວກັບ [ຂ]ເຢຣູ
ຊາເລັມ—ວ່າມັນຈະຖືກທຳລາຍພ້ອມກັບຜູ້
ອາໄສຢູ່ໃນນັ້ນ; ຄົນຈຳນວນຫລວງຫລາຍ
ກໍຈະຕາຍດ້ວຍດາບ, ແລະ ຈຳນວນໜຶ່ງກໍ
ຈະຖືກ [ຄ]ເອົາໄປເປັນຊະເລີຍໃນບາບີໂລນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ບິດາຂອງຂ້າພະເຈົ້າໄດ້ອ່ານ ແລະ ໄດ້
ເຫັນສິ່ງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນ
ຫລາຍຢ່າງແລ້ວ, ເພິ່ນກໍໄດ້ທູນຂໍຫລາຍ
ຢ່າງຕໍ່ພຣະຜູ້ເປັນເຈົ້າ ເຊັ່ນ: ໂອ້ ອົງພຣະ
ຜູ້ເປັນເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ເອີຍ
ວຽກງານຂອງພຣະອົງຊົງຍິ່ງໃຫຍ່ ແລະ
ໜ້າອັດສະຈັນແທ້ໆ! ພຣະທີ່ນັ່ງຂອງພຣະ
ອົງຢູ່ສູງໃນຟ້າສະຫວັນ, ອຳນາດ ແລະ
ພຣະກະລຸນາທິຄຸນ ແລະ ຄວາມເມດຕາ
ຂອງພຣະອົງມີຢູ່ເໜືອຜູ້ອາໄສທັງປວງ
ຂອງແຜ່ນດິນໂລກ; ແລະ ເພາະພຣະອົງມີ
ຄວາມເມດຕາ, ພຣະອົງຈະບໍ່ຍອມໃຫ້ຜູ້ທີ່
[ກ]ມາຫາພຣະອົງຖືກທຳລາຍ!
15 ແລະ ຕາມນີ້ຄືພາສາຂອງບິດາຂອງ
ຂ້າພະເຈົ້າໃນການສັນລະເສີນພຣະເຈົ້າ
ຂອງເພິ່ນ; ເພາະຈິດວິນຍານຂອງເພິ່ນປິຕິ
ຍິນດີ, ແລະ ສຸດໃຈຂອງເພິ່ນອີ່ມເອີບເພາະ
ສິ່ງທີ່ເພິ່ນໄດ້ເຫັນ, ແທ້ຈິງແລ້ວ, ສິ່ງທີ່ພຣະ
ເຈົ້າໄດ້ສະແດງຕໍ່ເພິ່ນ.
16 ແລະ ບັດນີ້ຂ້າພະເຈົ້າ, ນີໄຟ, ບໍ່ໄດ້
ເຮັດເລື່ອງລາວຄົບຖ້ວນເຖິງເລື່ອງທີ່ບິດາ
ຂອງຂ້າພະເຈົ້າໄດ້ບັນທຶກໄວ້, ເພາະເພິ່ນ
ໄດ້ບັນທຶກໄວ້ຫລາຍເລື່ອງທີ່ເພິ່ນໄດ້ເຫັນ
ໃນພາບນິມິດ ແລະ ໃນຄວາມຝັນ; ແລະ
ເພິ່ນໄດ້ຂຽນໄວ້ຫລາຍເລື່ອງທີ່ເພິ່ນ [ກ]ໄດ້
ທຳນາຍ ແລະ ໄດ້ເວົ້າກັບລູກຫລານຂອງ
ເພິ່ນນຳອີກ, ຊຶ່ງຂ້າພະເຈົ້າບໍ່ໄດ້ບັນທຶກ
ເລື່ອງລາວໄວ້ຄົບຖ້ວນ.
17 ແຕ່ ຂ້າ ພະ ເຈົ້າ ຈະ ຂຽນ ເລື່ອງ ລາວ
ກ່ຽວກັບການປະຕິບັດຂອງຂ້າພະເຈົ້າໃນ
ວັນເວລາຂອງຂ້າພະເຈົ້າ. ຈົ່ງເບິ່ງ, ຂ້າພະ
ເຈົ້າໄດ້ [ກ]ຫຍໍ້ຂໍ້ຄວາມຈາກ [ຂ]ບັນທຶກຂອງ
ບິດາຂອງຂ້າພະເຈົ້າໄວ້ໃນແຜ່ນຈາລຶກ
ຊຶ່ງເຮັດດ້ວຍມືຂອງຂ້າພະເຈົ້າເອງ. ດັ່ງນັ້ນ
ຫລັງຈາກຂ້າພະເຈົ້າຫຍໍ້ບັນທຶກຂອງບິດາ
ຂອງຂ້າພະເຈົ້າແລ້ວ, ຂ້າພະເຈົ້າຈຶ່ງຈະ
ຂຽນເລື່ອງລາວກ່ຽວກັບຊີວິດຂອງຂ້າພະ
ເຈົ້າເອງ.
18 ສະນັ້ນ, ຂ້າພະເຈົ້າຈຶ່ງປາດຖະໜາ
ຈະໃຫ້ທ່ານຮູ້ວ່າ ຫລັງຈາກພຣະຜູ້ເປັນເຈົ້າ
ໄດ້ສະແດງສິ່ງທີ່ໜ້າອັດສະຈັນຫລາຍຢ່າງ
ຕໍ່ລີໄຮ, ບິດາຂອງຂ້າພະເຈົ້າ, ແທ້ຈິງແລ້ວ,
ກ່ຽວກັບ [ກ]ຄວາມພິນາດຂອງເຢຣູຊາເລັມ,
ຈົ່ງເບິ່ງ, ເພິ່ນໄດ້ອອກໄປໃນບັນດາຜູ້ຄົນ
ແລະ ເລີ່ມຕົ້ນ [ຂ]ທຳນາຍ ແລະ ປະກາດກັບ
ພວກເຂົາເຖິງເລື່ອງທີ່ເພິ່ນໄດ້ເຫັນ ແລະ
ໄດ້ຍິນມາ.

---

12 *ກ* ຄພ 6:15.
13 *ກ* 2 ກສ 24:18–20; 2 ຂຄ 36:14.
*ຂ* 2 ກສ 23:27; 24:2; ຢມຢ 13:13–14; 2 ນຟ 1:4.
*ຄ* 2 ກສ 20:17–18; 2 ນຟ 25:10; ອມນ 1:15.
14 *ກ* ແອວ 5:33–36; 3 ນຟ 9:14.
16 *ກ* 1 ນຟ 7:1.
17 *ກ* 1 ນຟ 9:2–5.
*ຂ* 1 ນຟ 6:1–3; 19:1–6; 2 ນຟ 5:29–33; ຄພ 10:38–46.
18 *ກ* 2 ນຟ 25:9–10; ຄພ 5:20.
*ຂ* ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ຢິວໄດ້ [ກ]ເຍາະເຍີ້ຍເພິ່ນ ເພາະເລື່ອງທີ່ເພິ່ນ
ໃຫ້ຖ້ອຍຄຳກ່ຽວກັບພວກເຂົາ; ເພາະເພິ່ນ
ໃຫ້ຖ້ອຍຄຳອັນແທ້ຈິງເຖິງຄວາມຊົ່ວຮ້າຍ
ຂອງພວກເຂົາ ແລະ ຄວາມໜ້າກຽດຊັງ
ຂອງພວກເຂົາ; ແລະ ເພິ່ນໃຫ້ຖ້ອຍຄຳວ່າ
ເລື່ອງທີ່ເພິ່ນໄດ້ເຫັນ ແລະ ໄດ້ຍິນ, ແລະ
ທັງເລື່ອງທີ່ເພິ່ນອ່ານຈາກໜັງສືເຫລັ້ມນັ້ນ
ຊຶ່ງສະແດງໃຫ້ປະຈັກຢ່າງແຈ່ມແຈ້ງເຖິງ
ການສະເດັດມາຂອງ [ຂ]ພຣະເມຊີອາອົງ
ໜຶ່ງ, ແລະ ການໄຖ່ຂອງໂລກນຳອີກ.
20 ແລະ ເມື່ອຊາວຢິວໄດ້ຍິນເຖິງເລື່ອງ
ເຫລົ່ານີ້ ພວກເຂົາກໍຄຽດແຄ້ນໃຫ້ເພິ່ນ;
ແທ້ຈິງແລ້ວ, ເໝືອນກັນກັບຄຽດແຄ້ນໃຫ້
ສາດສະດາໃນສະໄໝກ່ອນ, ຜູ້ທີ່ພວກເຂົາ
ໄດ້ [ກ]ຂັບໄລ່, ແລະ ແກວ່ງກ້ອນຫີນໃສ່,
ແລະ ເຂັ່ນຂ້າ, ແລະ ຄົນເຫລົ່ານັ້ນກໍພະຍາ
ຍາມຊອກຫາຊີວິດຂອງເພິ່ນເໝືອນກັນ,
ເພື່ອຈະເອົາມັນໄປເສຍ. ແຕ່ຈົ່ງເບິ່ງ, ຂ້າ
ພະເຈົ້ານີໄຟຂໍສະແດງຕໍ່ທ່ານວ່າ [ຂ]ຄວາມ
ເມດຕາອັນລະອຽດອ່ອນຂອງພຣະຜູ້ເປັນ
ເຈົ້າມີຢູ່ເໜືອທຸກຄົນທີ່ພຣະອົງເລືອກໄວ້,
ເປັນເພາະສັດທາຂອງພວກເຂົາ, ມັນຈຶ່ງ
ເຮັດໃຫ້ພວກເຂົາເຂັ້ມແຂງຈົນເຖິງອຳນາດ
ການປົດປ່ອຍ.

## ບົດທີ 2

*ລີໄຮອອກເດີນທາງພ້ອມດ້ວຍຄອບຄົວເຂົ້າໄປໃນຖິ່ນແຫ້ງແລ້ງກັນດານທີ່ຢູ່ຝັ່ງທະເລແດງ—ເຂົາເຈົ້າໄດ້ປະຖິ້ມຊັບສົມບັດຂອງເຂົາເຈົ້າ—ລີໄຮໄດ້ຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ ແລະ ສິດສອນລູກຊາຍຂອງເພິ່ນ ໃຫ້ຮັກສາພຣະບັນຍັດ—ເລມັນກັບເລມູເອນຈົ່ມໃຫ້ບິດາຂອງຕົນ—ນີໄຟເຊື່ອຟັງ ແລະ ອະທິຖານໃນສັດທາ; ພຣະຜູ້ເປັນເຈົ້າສັ່ງກັບນີໄຟ, ແລະ ລາວໄດ້ຖືກເລືອກໃຫ້ເປັນຜູ້ປົກຄອງພວກອ້າຍຂອງລາວ. ປະມານ 600 ປີກ່ອນ ຄ.ສ.*

1 ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື ພຣະຜູ້ເປັນເຈົ້າໄດ້ບັນຊາບິດາຂອງຂ້າ
ພະເຈົ້າ, ແທ້ຈິງແລ້ວ, ແມ່ນຢູ່ໃນຄວາມຝັນ
ແລະ ກ່າວກັບເພິ່ນວ່າ: ເຈົ້າເປັນສຸກແລ້ວ
ລີໄຮເພາະສິ່ງທີ່ເຈົ້າກະທຳໄວ້, ແລະ ເພາະ
ເຈົ້າຊື່ສັດ ແລະ ປະກາດກັບຜູ້ຄົນພວກນີ້
ເຖິງເລື່ອງທີ່ເຮົາສັ່ງເຈົ້າ, ຈົ່ງເບິ່ງ, ພວກເຂົາ
ພະຍາຍາມຈະ [ກ]ເອົາຊີວິດຂອງເຈົ້າ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າ [ກ]ໄດ້ບັນຊາບິດາຂອງຂ້າພະ
ເຈົ້າຢູ່ໃນ [ຂ]ຄວາມຝັນວ່າ ເພິ່ນຄວນ [ຄ]ນຳ
ຄອບຄົວຂອງເພິ່ນອອກໄປໃນຖິ່ນແຫ້ງ
ແລ້ງກັນດານ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ເປັນຄົນ [ກ]ເຊື່ອຟັງພຣະຄຳຂອງພຣະຜູ້ເປັນ
ເຈົ້າ, ດັ່ງນັ້ນ ເພິ່ນຈຶ່ງເຮັດຕາມພຣະຄຳທີ່
ພຣະອົງບັນຊາເພິ່ນ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ອອກໄປໃນຖິ່ນແຫ້ງແລ້ງກັນດານ.
ແລະ ເພິ່ນໄດ້ປະຖິ້ມເຮືອນຊານ ແລະ
ແຜ່ນດິນຊຶ່ງເປັນມູນມໍລະດົກຂອງເພິ່ນ,
ແລະ ຄຳຂອງເພິ່ນ, ແລະ ເງິນຂອງເພິ່ນ,

---

19 *ກ* 2 ຂຄ 36:15–16;
ຢມຢ 25:4;
1 ນຟ 2:13; 7:14.
*ຂ* ຄມພ ພຣະເມຊີອາ.
20 *ກ* ຮລມ 13:24–26.
*ຂ* ແອວ 34:38;
ຄພ 46:15.
ຄມພ ເມດຕາ, ມີເມດ
ຕາ, ຄວາມເມດຕາ.
**2** 1 *ກ* 1 ນຟ 7:14.
2 *ກ* 1 ນຟ 5:8; 17:44.
*ຂ* ຄມພ ຝັນ.
*ຄ* ປຖກ 12:1;
2 ນຟ 10:20;
ອທ 1:42;
ອຣຣ 2:3.
3 *ກ* ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.

ແລະ ຂອງມີຄ່າຂອງເພິ່ນ, ແລະ ບໍ່ໄດ້ເອົາສິ່ງໃດໄປກັບເພິ່ນເລີຍ, ນອກຈາກຄອບຄົວ, ແລະ ສະບຽງອາຫານ, ແລະ ຜ້າເຕັ້ນ, ແລະ [ກ]ອອກໄປໃນຖິ່ນແຫ້ງແລ້ງກັນດານ.

5 ແລະ ເພິ່ນລົງມາເຖິງຊາຍແດນໃກ້ຝັ່ງ [ກ]ທະເລແດງ; ແລະ ເພິ່ນເດີນທາງໃນຖິ່ນແຫ້ງແລ້ງກັນດານໃນຊາຍແດນ ຊຶ່ງຢູ່ໃກ້ທະເລແດງເຂົ້າໄປອີກ; ແລະ ເພິ່ນໄດ້ເດີນທາງໄປໃນຖິ່ນແຫ້ງແລ້ງກັນດານກັບຄອບຄົວຂອງເພິ່ນທີ່ມີຊາໄຣຢາ, ມານດາຂອງຂ້າພະເຈົ້າ, ແລະ ພວກອ້າຍຂອງຂ້າພະເຈົ້າຄື [ຂ]ເລມັນ, ເລມູເອນ, ແລະ ແຊມ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອເພິ່ນເດີນທາງໃນຖິ່ນແຫ້ງແລ້ງກັນດານໄດ້ສາມມື້, ເພິ່ນໄດ້ຕັ້ງຜ້າເຕັ້ນຂອງເພິ່ນຂຶ້ນໃນ [ກ]ຮ່ອມພູທີ່ຢູ່ແຄມຝັ່ງຂອງແມ່ນ້ຳສາຍໜຶ່ງ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ສ້າງ [ກ]ແທ່ນບູຊາດ້ວຍ [ຂ]ຫີນ, ແລະ ທຳການຖວາຍເຄື່ອງບູຊາ ແດ່ພຣະຜູ້ເປັນເຈົ້າ, ແລະ ຖວາຍຄວາມ [ຄ]ຂອບພຣະຄຸນແດ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຮົາ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນຕັ້ງຊື່ແມ່ນ້ຳນັ້ນວ່າ ເລມັນ, ແລະ ມັນໄຫລລົງສູ່ທະເລແດງ, ແລະ ຮ່ອມພູຢູ່ໃນຊາຍແດນໃກ້ປາກແມ່ນ້ຳສາຍນັ້ນ.

9 ແລະ ເມື່ອບິດາຂອງຂ້າພະເຈົ້າເຫັນວ່າ ແມ່ນ້ຳໄຫລລົງໄປສູ່ອ່າງນ້ຳທະເລແດງ, ເພິ່ນຈຶ່ງເວົ້າກັບເລມັນມີຄວາມວ່າ: ໂອ້ ຂໍໃຫ້ລູກຈົ່ງເປັນຄືກັນກັບແມ່ນ້ຳສາຍນີ້ ຊຶ່ງໄຫລໄປຫາອ່າງນ້ຳແຫ່ງຄວາມຊອບທຳທັງປວງຕະຫລອດເວລາດ້ວຍເທີ້ນ!

10 ແລະ ເພິ່ນເວົ້າກັບເລມູເອນອີກວ່າ: ໂອ້ ຂໍໃຫ້ລູກຈົ່ງເປັນເໝືອນດັ່ງຮ່ອມພູນີ້, ຊຶ່ງໝັ້ນຄົງ ແລະ ແນ່ວແນ່, ແລະ ບໍ່ຫວັ່ນໄຫວໃນການຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າ!

11 ບັດນີ້ເພິ່ນເວົ້າເຊັ່ນນີ້ ເພາະຄວາມແຂງຄໍຂອງເລມັນກັບເລມູເອນ; ເພາະຈົ່ງເບິ່ງ ພວກເຂົາໄດ້ [ກ]ຈົ່ມໃຫ້ [ຂ]ບິດາຂອງພວກເຂົາຫລາຍສິ່ງຫລາຍຢ່າງ, ເພາະເພິ່ນເປັນຄົນເຫັນ [ຄ]ພາບນິມິດ, ແລະ ພາພວກເຂົາອອກຈາກເຢຣູຊາເລັມ, ແຜ່ນດິນຊຶ່ງເປັນມູນມໍລະດົກຂອງພວກເຂົາ, ແລະຈາກຄຳຂອງພວກເຂົາ, ແລະ ເງິນຂອງພວກເຂົາ, ແລະ ຂອງມີຄ່າຂອງພວກເຂົາໃຫ້ມາຕາຍຢູ່ໃນຖິ່ນແຫ້ງແລ້ງກັນດານ. ແລະ ການນີ້ຄົນທັງສອງກ່າວວ່າ ເພິ່ນກະທຳໄປດ້ວຍຄວາມຄິດຝັນອັນໂງ່ຈ້າທີ່ເກີດຂຶ້ນໃນໃຈຂອງເພິ່ນເອງ.

12 ແລະ ເຖິງແມ່ນວ່າເລມັນກັບເລມູເອນເປັນອ້າຍໃຫຍ່ກໍຕາມ, ແຕ່ພວກເຂົາໄດ້ຈົ່ມໃຫ້ບິດາຂອງຕົນ. ແລະ ພວກເຂົາໄດ້ຈົ່ມເພາະ [ກ]ບໍ່ຮູ້ການກະທຳຂອງພຣະເຈົ້າອົງນັ້ນຜູ້ສ້າງພວກເຂົາ.

13 ພວກເຂົາທັງບໍ່ເຊື່ອວ່າເຢຣູຊາເລັມ, ມະຫານະຄອນທີ່ຍິ່ງໃຫຍ່, ຈະ [ກ]ຖືກທຳລາຍໄດ້ຕາມຄຳເວົ້າຂອງສາດສະດາ. ແລະ ພວກເຂົາເປັນເໝືອນດັ່ງຊາວຢິວຜູ້ຢູ່ໃນເຢຣູຊາເລັມ, ທີ່ພະຍາຍາມຈະເອົາຊີວິດຂອງບິດາຂອງຂ້າພະເຈົ້າໄປ.

4 ກ 1 ນຟ 10:4; 19:8.
5 ກ 1 ນຟ 16:14; ຄພ 17:1.
ຂ ຄມພ ເລມັນ.
6 ກ 1 ນຟ 9:1.
7 ກ ປຖກ 12:7–8; ອພຍ 24:4; ອຣຮ 2:17.
ຂ ອພຍ 20:25; ພບຍ 27:5–6.
ຄ ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
11 ກ 1 ນຟ 17:17. ຄມພ ຈົ່ມ.
ຂ ສພສ 20:20.
ຄ 1 ນຟ 5:2–4.
12 ກ ມຊ 4:6.
13 ກ ຍມຍ 13:14; 1 ນຟ 1:13.

14 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ບິດາຂອງຂ້າພະເຈົ້າໄດ້ເວົ້າກັບພວກເຂົາ
ໃນຮ່ອມພູເລມູເອນ, ດ້ວຍ [ກ]ພະລັງ, ໂດຍ
ທີ່ເພິ່ນເຕັມໄປດ້ວຍພຣະວິນຍານ, ຈົນ
ຮ່າງກາຍຂອງພວກເຂົາ [ຂ]ສັ່ນຢູ່ຕໍ່ໜ້າເພິ່ນ.
ແລະ ເພິ່ນໄດ້ເຮັດໃຫ້ພວກເຂົາອັບອາຍ
ຈົນພວກເຂົາບໍ່ກ້າຕໍ່ວ່າເພິ່ນ; ດັ່ງນັ້ນ, ພວກ
ເຂົາຈຶ່ງເຮັດຕາມທີ່ເພິ່ນບັນຊາ.

15 ແລະ ບິດາຂອງຂ້າພະເຈົ້າອາໄສຢູ່
ໃນຜ້າເຕັ້ນ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໂດຍທີ່ມີອາຍຸໜ້ອຍຢູ່, ແຕ່ວ່າ
ມີຮ່າງກາຍສູງໃຫຍ່ ແລະ ມີຄວາມປາດຖະ
ໜາອັນແຮງກ້າຢາກຮູ້ຈັກ [ກ]ຄວາມລຶກລັບ
ຂອງພຣະເຈົ້າ, ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້
ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ; ແລະ ຈົ່ງເບິ່ງ
ພຣະອົງໄດ້ [ຂ]ສະເດັດມາຫາຂ້າພະເຈົ້າ,
ແລະ ເຮັດໃຫ້ໃຈຂອງຂ້າພະເຈົ້າ [ຄ]ອ່ອນ
ລົງຈົນວ່າຂ້າພະເຈົ້າ [ງ]ເຊື່ອຄຳເວົ້າທີ່ [ຈ]ບິດາ
ຂອງຂ້າພະເຈົ້າເວົ້າມາທັງໝົດ; ດັ່ງນັ້ນ,
ຂ້າພະເຈົ້າຈຶ່ງບໍ່ໄດ້ກະບົດຕໍ່ເພິ່ນ ເໝືອນ
ດັ່ງພວກອ້າຍຂອງຂ້າພະເຈົ້າ.

17 ແລະ ຂ້າພະເຈົ້າໄດ້ເວົ້າກັບແຊມ
ເພື່ອເຮັດໃຫ້ລາວຮູ້ຈັກເລື່ອງທີ່ພຣະຜູ້ເປັນ
ເຈົ້າໄດ້ສະແດງໃຫ້ປະຈັກແກ່ຂ້າພະເຈົ້າ
ດ້ວຍພຣະວິນຍານສັກສິດຂອງພຣະອົງ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວເຊື່ອ
ໃນຄຳເວົ້າຂອງຂ້າພະເຈົ້າ.

18 ແຕ່ຈົ່ງເບິ່ງ ເລມັນກັບເລມູເອນບໍ່ເຊື່ອ
ຟັງຄຳເວົ້າຂອງຂ້າພະເຈົ້າ; ແລະ ດ້ວຍ
[ກ]ຄວາມໂສກເສົ້າເພາະຄວາມແຂງກະດ້າງ
ຂອງໃຈຂອງພວກເຂົາ, ຂ້າພະເຈົ້າຈຶ່ງໄດ້
ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າເພື່ອພວກເຂົາ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າຮັບສັ່ງກັບຂ້າພະເຈົ້າ, ມີ
ຄວາມວ່າ: ເຈົ້າເປັນສຸກແລ້ວນີໄຟເພາະ
[ກ]ສັດທາຂອງເຈົ້າ, ເພາະເຈົ້າສະແຫວງຫາ
ເຮົາຢ່າງພາກພຽນ, ດ້ວຍຄວາມຕ່ຳຕ້ອຍ
ໃນໃຈ.

20 ແລະ ຕາບໃດທີ່ເຈົ້າຈະຮັກສາບັນຍັດ
ຂອງເຮົາ, ເຈົ້າຈະ [ກ]ຮຸ່ງເຮືອງ, ແລະ ຈະຖືກ
ພາໄປຫາ [ຂ]ແຜ່ນດິນແຫ່ງຄຳສັນຍາ; ແທ້
ຈິງແລ້ວ, ແມ່ນແຜ່ນດິນທີ່ເຮົາຕຽມໄວ້ໃຫ້
ເຈົ້າ; ແທ້ຈິງແລ້ວ, ແມ່ນແຜ່ນດິນທີ່ປະເສີດ
ເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ.

21 ແລະ ຕາບໃດທີ່ພວກອ້າຍຂອງເຈົ້າ
ຍັງກະບົດຕໍ່ເຈົ້າ, ພວກເຂົາຈະຖືກ [ກ]ຕັດ
ອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ.

22 ແລະ ຕາບໃດທີ່ເຈົ້າຍັງຮັກສາບັນຍັດ
ຂອງເຮົາ, ເຈົ້າຈະຖືກກະທຳໃຫ້ເປັນ [ກ]ຜູ້
ປົກຄອງ ແລະ ຜູ້ສອນພວກອ້າຍຂອງເຈົ້າ.

23 ເພາະຈົ່ງເບິ່ງ, ໃນມື້ນັ້ນທີ່ພວກເຂົາ
ກະບົດຕໍ່ເຮົາ, ເຮົາຈະ [ກ]ສາບແຊ່ງພວກເຂົາ
ເຖິງຂະໜາດວ່າເປັນການສາບແຊ່ງຢ່າງ

---

14 *ກ* ຄມພ ອຳນາດ.
*ຂ* 1 ນຟ 17:45.
16 *ກ* ຄມພ ຄວາມລຶກລັບ ຂອງພຣະເຈົ້າ.
*ຂ* ພສສ 8:4; ແອວ 17:10; ຄພ 5:16. ຄມພ ເປີດເຜີຍ, ການເປີດເຜີຍ.
*ຄ* 1 ກສ 18:37; ແອວ 5:7.
*ງ* 1 ນຟ 11:5.
*ຈ* ຄມພ ສາດສະດາ; ພໍ່, ມະຕະ.
18 *ກ* ແອວ 31:24; 3 ນຟ 7:16.
19 *ກ* 1 ນຟ 7:12; 15:11.
20 *ກ* ຢຊ 1:7; 1 ນຟ 4:14; ມຊຢ 1:7.
*ຂ* ພບຍ 33:13–16; 1 ນຟ 5:5; 7:13; ມຊ 7:17–18. ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
21 *ກ* 2 ນຟ 5:20–24; ແອວ 9:13–15; 38:1.
22 *ກ* ປຖກ 37:8–11; 1 ນຟ 3:29.
23 *ກ* ພບຍ 11:28; 1 ນຟ 12:22–23; ຄພ 41:1.

ສາ ທັດ, ແລະ ພວກ ເຂົາ ຈະ ບໍ່ ມີ ອຳນາດ
ເໜືອກວ່າລູກຫລານຂອງເຈົ້າເວັ້ນເສຍແຕ່
ພວກເຂົາຈະກະບົດຕໍ່ເຮົາເໝືອນກັນ.
24 ແລະ ຖ້າຫາກເປັນໄປວ່າ ພວກເຂົາ
ກະບົດຕໍ່ເຮົາ, ພວກເຂົາກໍຈະເປັນ [ກ]ໄພພິ
ບັດ ແກ່ລູກຫລານຂອງ ເຈົ້າ, ນີ້ ເພື່ອຊ່ວຍ
[ຂ]ຕັກເຕືອນພວກເຂົາທາງຄວາມຊົງຈຳ.

## ບົດທີ 3

*ລູກຊາຍຂອງລີໄຮກັບຄືນໄປເຢຣູຊາເລັມ ເພື່ອ ເອົາ ແຜ່ນ ຈາລຶກ ທອງ ເຫລືອງ— ລາບານບໍ່ຍອມມອບ ແຜ່ນຈາລຶກ ໃຫ້— ນີໄຟຊັກຊວນ ແລະ ຊຸກຍູ້ພວກອ້າຍຂອງ ລາວ—ລາບານຍຶດ ເອົາຊັບສົມບັດຂອງ ເຂົາເຈົ້າ ແລະ ພະຍາຍາມຂ້າເຂົາເຈົ້າ— ເລມັນກັບ ເລ ມູເອນ ຕີ ນີໄຟ ແລະ ແຊມ ແລະ ທູດ ໄດ້ ຕຳ ນິ ພວກ ເຂົາ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື ຂ້າ
ພະເຈົ້ານີໄຟຫລັງຈາກໄດ້ເວົ້າກັບພຣະຜູ້
ເປັນ ເຈົ້າ ແລ້ວ, ກໍ ກັບມາຫາຜ້າເຕັ້ນຂອງ
ບິດາຂອງຂ້າພະເຈົ້າ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ເວົ້າກັບຂ້າພະເຈົ້າ, ມີຄວາມວ່າ: ຈົ່ງເບິ່ງ
ພໍ່ຝັນເຫັນເລື່ອງໜຶ່ງໃນ [ກ]ຄວາມຝັນ, ຊຶ່ງໃນ
ຄວາມຝັນນັ້ນພຣະຜູ້ເປັນເຈົ້າໄດ້ບັນຊາພໍ່
ວ່າ ລູກກັບພວກອ້າຍຂອງລູກຕ້ອງກັບຄືນ
ໄປເຢຣູຊາເລັມ.
3 ເພາະຈົ່ງເບິ່ງ, ລາບານມີບັນທຶກຂອງ
ຊາວຢິວ ແລະ [ກ]ລຳດັບການສືບເຊື້ອສາຍ
ຂອງບັນພະບຸລຸດຂອງພໍ່ຄືກັນ, ແລະ ມັນ
ໄດ້ຈາລຶກຢູ່ໃນແຜ່ນຈາລຶກທອງເຫລືອງ.
4 ດັ່ງນັ້ນ, ພຣະເຈົ້າໄດ້ບັນຊາພໍ່ວ່າ ລູກ
ກັບພວກອ້າຍຂອງລູກຈະຕ້ອງກັບໄປບ້ານ
ຂອງລາບານ, ເພື່ອຊອກຫາບັນທຶກ, ແລະ
ນຳ ເອົາ ມັນ ມາ ໃນ ຖິ່ນ ແຫ້ງແລ້ງກັນດານ
ບ່ອນນີ້.
5 ແລະ ບັດ ນີ້, ຈົ່ງ ເບິ່ງ ພວກ ອ້າຍ ຂອງ
ລູກຈົ່ມ, ໂດຍກ່າວວ່າ ເລື່ອງທີ່ພໍ່ຂໍຮ້ອງໃຫ້
ພວກເຂົາເຮັດນັ້ນ ເປັນເລື່ອງຍາກ; ແຕ່ຈົ່ງ
ເບິ່ງ, ພໍ່ບໍ່ໄດ້ຂໍຮ້ອງໃຫ້ພວກເຂົາເຮັດ, ແຕ່
ມັນເປັນພຣະບັນຍັດຂອງພຣະຜູ້ເປັນເຈົ້າ.
6 ສະນັ້ນ ຈົ່ງໄປເຖີດ, ລູກຂອງພໍ່, ແລະ
ລູກຈະເປັນທີ່ໂປດປານຂອງພຣະຜູ້ເປັນ
ເຈົ້າ, ເພາະລູກ [ກ]ບໍ່ໄດ້ຈົ່ມ.
7 ແລະ ເຫດການ ໄດ້ ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເວົ້າກັບບິດາຂອງຂ້າພະ
ເຈົ້າວ່າ: ເຮົາ [ກ]ຈະໄປ ແລະ ເຮັດສິ່ງທີ່ພຣະ
ຜູ້ເປັນເຈົ້າບັນຊາ ເພາະເຮົາຮູ້ວ່າພຣະຜູ້
ເປັນ ເຈົ້າ ຈະ ບໍ່ ໃຫ້ [ຂ]ພຣະບັນຍັດກັບລູກ
ຫລານມະນຸດ ນອກຈາກພຣະອົງຈະ [ຄ]ຕຽມ
ທາງໄວ້ໃຫ້ເຂົາ ເພື່ອເຂົາຈະໄດ້ສຳເລັດໃນ
ສິ່ງທີ່ພຣະອົງບັນຊາເຂົາ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ບິດາຂອງຂ້າພະເຈົ້າໄດ້ຍິນຄຳເວົ້າເຫລົ່າ
ນີ້ ເພິ່ນກໍດີໃຈຢ່າງຍິ່ງ, ເພາະເພິ່ນຮູ້ວ່າ ຂ້າ
ພະເຈົ້າໄດ້ຮັບພອນຈາກພຣະຜູ້ເປັນເຈົ້າ
ແລ້ວ.
9 ແລະ ຂ້າພະ ເຈົ້າ ນີໄຟ ກັບ ພວກອ້າຍ
ຂອງ ຂ້າພະ ເຈົ້າ ໄດ້ ອອກ ເດີນທາງ ໄປ ໃນ
ຖິ່ນແຫ້ງແລ້ງກັນດານ, ພ້ອມດ້ວຍຜ້າເຕັ້ນ,

24 *ກ* ຢຊ 23:13; ຜປ 2:22–23.
*ຂ* 2 ນຟ 5:25.
**3** 2 *ກ* ຄມພ ຝັນ.
3 *ກ* 1 ນຟ 5:14.
6 *ກ* ຄມພ ການສະໜັບສະໜູນ ຜູ້ນຳຂອງສາດສະໜາຈັກ.
7 *ກ* 1 ຊມອ 17:32; 1 ກສ 17:11–15. ຄມພ ສັດທາ; ເຊື່ອຟັງ, ການເຊື່ອ ຟັງ, ຟັງຄວາມ.
*ຂ* ຄມພ ພຣະບັນຍັດ ຂອງພຣະເຈົ້າ.
*ຄ* ປຖກ 18:14; ຟລປ 4:13; 1 ນຟ 17:3, 50; ຄພ 5:34.

ເພື່ອຂຶ້ນໄປແຜ່ນດິນເຢຣູຊາເລັມ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຮົາຂຶ້ນມາເຖິງແຜ່ນດິນເຢຣູຊາເລັມ
ແລ້ວ, ຂ້າພະເຈົ້າກັບພວກອ້າຍໄດ້ປຶກສາ
ກັນ.
11 ແລະ ພວກເຮົາ [ກ]ຈົກສະຫລາກກັນ—
ວ່າຜູ້ໃດໃນຈຳນວນພວກເຮົາຈະໄດ້ເຂົ້າ
ໄປໃນບ້ານຂອງລາບານ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ສະຫລາກຕົກຢູ່ທີ່ເລມັນ;
ແລະ ເລມັນຈຶ່ງໄດ້ເຂົ້າໄປໃນບ້ານລາບານ,
ແລະ ເວົ້າກັບລາວລະຫວ່າງທີ່ນັ່ງຢູ່ໃນ
ບ້ານຂອງລາວ.
12 ແລະ ລາວໄດ້ຂໍບັນທຶກຊຶ່ງຈາລຶກໄວ້
ຢູ່ໃນແຜ່ນຈາລຶກທອງເຫລືອງ, ຊຶ່ງມີ [ກ]ລຳ
ດັບການສືບເຊື້ອສາຍຂອງບິດາຂອງຂ້າ
ພະເຈົ້າຈາກລາບານ.
13 ແລະ ຈົ່ງເບິ່ງ, ເຫດການໄດ້ບັງເກີດ
ຂຶ້ນຄື ລາບານໃຈຮ້າຍ, ແລະ ຈັບລາວ
ໂຍນອອກໄປຈາກບ່ອນຢູ່ຂອງຕົນ; ແລະ
ບໍ່ຍອມມອບບັນທຶກໃຫ້ແກ່ລາວ. ດັ່ງນັ້ນ,
ລາວຈຶ່ງກ່າວກັບລາວວ່າ: ຈົ່ງເບິ່ງ, ເຈົ້າເປັນ
ຂະໂມຍ ແລະ ເຮົາຈະຂ້າເຈົ້າ.
14 ແຕ່ເລມັນໜີໄປຈາກທີ່ຢູ່ຂອງລາວ,
ແລະ ເລົ່າເລື່ອງທີ່ລາບານກະທຳໄປນັ້ນ
ກັບພວກເຮົາ. ແລະ ພວກເຮົາເລີ່ມເສົ້າສະ
ຫລົດໃຈຢ່າງຍິ່ງ, ແລະ ພວກອ້າຍຂອງຂ້າ
ພະເຈົ້າເກືອບຈະກັບໄປຫາບິດາຂອງຂ້າ
ພະເຈົ້າໃນຖິ່ນແຫ້ງແລ້ງກັນດານ.
15 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກ
ເຂົາວ່າ: ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະ
ຊົນຢູ່ ແລະ ຕາບໃດທີ່ພວກເຮົາຍັງມີຊີວິດ
ຢູ່, ພວກເຮົາຈະບໍ່ລົງໄປຫາບິດາຂອງພວກ
ເຮົາໃນຖິ່ນແຫ້ງແລ້ງກັນດານ ຈົນກວ່າຈະ
ສຳເລັດໃນສິ່ງທີ່ພຣະຜູ້ເປັນເຈົ້າບັນຊາ
ພວກເຮົາ.
16 ດັ່ງນັ້ນ, ໃຫ້ພວກເຮົາຊື່ສັດໃນການ
ຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າ;
ສະນັ້ນໃຫ້ພວກເຮົາລົງໄປຫາແຜ່ນດິນ ຊຶ່ງ
ເປັນ [ກ]ມູນມໍລະດົກຂອງບິດາຂອງພວກ
ເຮົາ, ເພາະຈົ່ງເບິ່ງ ເພິ່ນໄດ້ປະຖິ້ມຄຳ ແລະ
ເງິນ, ແລະ ຂອງມີຄ່ານາໆປະການໄວ້.
ແລະ ທັງໝົດນີ້ເພິ່ນກະທຳໄປເພາະ [ຂ]ພຣະ
ບັນຍັດຂອງພຣະຜູ້ເປັນເຈົ້າ.
17 ເພາະເພິ່ນຮູ້ວ່າ ເຢຣູຊາເລັມຈະຕ້ອງ
[ກ]ຖືກທຳລາຍເພາະຄວາມຊົ່ວຮ້າຍຂອງຜູ້
ຄົນ.
18 ເພາະຈົ່ງເບິ່ງ ຄົນເຫລົ່ານັ້ນ [ກ]ບໍ່ຍອມ
ຮັບຖ້ອຍຄຳຂອງສາດສະດາ. ດັ່ງນັ້ນ, ຖ້າ
ຫາກບິດາຂອງຂ້າພະເຈົ້າຍັງຢູ່ໃນແຜ່ນດິນ
ນັ້ນຫລັງຈາກເພິ່ນໄດ້ຮັບ [ຂ]ບັນຊາໃຫ້ໜີ
ຈາກແຜ່ນດິນແລ້ວ, ຈົ່ງເບິ່ງ, ເພິ່ນຈະຕ້ອງ
ຕາຍຄືກັນ. ດັ່ງນັ້ນ, ມັນຈຶ່ງຈຳເປັນທີ່ເພິ່ນ
ຈະຕ້ອງໜີຈາກແຜ່ນດິນນັ້ນ.
19 ແລະ ຈົ່ງເບິ່ງ, ມັນເປັນຄວາມສະຫລຽວ
ສະຫລາດຂອງພຣະເຈົ້າວ່າ ພວກເຮົາຈະ
ໄດ້ [ກ]ບັນທຶກເຫລົ່ານີ້, ເພື່ອຈະໄດ້ຮັກສາພາ
ສາຂອງບັນພະບຸລຸດຂອງພວກເຮົາໄວ້ໃຫ້
ແກ່ລູກຫລານຂອງພວກເຮົາ;
20 ແລະ ເພື່ອພວກເຮົາຈະ [ກ]ຮັກສາຖ້ອຍ
ຄຳຊຶ່ງເວົ້າດ້ວຍປາກຂອງສາດສະດາຜູ້ບໍລິ
ສຸດທັງຫລາຍໄວ້ໃຫ້ພວກເຂົາເໝືອນກັນ,
ຊຶ່ງພຣະວິນຍານ ແລະ ອຳນາດຂອງພຣະ

11 ກ ນມຍ 10:34;
ກຈກ 1:26.
12 ກ 1 ນຟ 3:3; 5:14.
16 ກ 1 ນຟ 2:4.
ຂ 1 ນຟ 2:2; 4:34.
17 ກ 2 ຂຄ 36:16–20;
ຢມຢ 39:1–9;
1 ນຟ 1:13.
18 ກ ຄມພ ກະບົດ, ການກະບົດ.
ຂ 1 ນຟ 16:8.
19 ກ ອມນ 1:17;
ມຊຢ 1:2–6.
20 ກ ຄມພ ພຣະຄຳພີ—ພຣະ
ຄຳພີທີ່ຕ້ອງຮັກສາໄວ້.

ເຈົ້າໄດ້ມອບໄວ້ກັບພວກເພິ່ນນັບແຕ່ການ
ເລີ່ມຕົ້ນຂອງໂລກລົງມາຈົນເຖິງປະຈຸບັນ
ນີ້.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ຕາມ
ພາສາຢ່າງນີ້ ຂ້າພະເຈົ້າໄດ້ຊັກຊວນພວກ
ອ້າຍຂອງຂ້າພະເຈົ້າ ເພື່ອພວກເຂົາຈະໄດ້
ຊື່ສັດໃນການຮັກສາພຣະບັນຍັດຂອງພຣະ
ເຈົ້າ.
22 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກ ເຮົາ ໄດ້ລົງ ໄປ ຫາ ແຜ່ນ ດິນ ຊຶ່ງເປັນ
ມູນ ມໍລະ ດົກ ຂອງ ພວກ ເຮົາ, ແລະ ພວກ
ເຮົາໄດ້ເຕົ້າໂຮມ [ກ]ຄຳຂອງພວກເຮົາ, ແລະ
ເງິນຂອງພວກເຮົາ, ແລະ ຂອງມີຄ່າຂອງ
ພວກເຮົາເຂົ້າກັນ.
23 ແລະ ຫລັງຈາກພວກເຮົາເຕົ້າໂຮມ
ຂອງເຫລົ່ານີ້ເຂົ້າກັນແລ້ວ, ພວກເຮົາຈຶ່ງ
ກັບຂຶ້ນໄປຫາບ້ານຂອງລາບານອີກ.
24 ແລະ ເຫດການ ໄດ້ ບັງເກີດຂຶ້ນຄື
ພວກ ເຮົາ ເຂົ້າ ໄປ ຫາ ລາ ບານ, ແລະ ຂໍ
ໃຫ້ລາວມອບບັນທຶກ ຊຶ່ງຈາລຶກໄວ້ຢູ່ໃນ
[ກ]ແຜ່ນ ຈາລຶກທອງເຫລືອງໃຫ້ແກ່ພວກ
ເຮົາ, ແລະ ພວກເຮົາຈະມອບຄຳຂອງພວກ
ເຮົາ, ແລະ ເງິນຂອງພວກເຮົາ, ແລະ ຂອງ
ມີຄ່າທັງໝົດຂອງພວກເຮົາໃຫ້ແກ່ລາວ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ລາບານເຫັນຊັບສົມບັດຂອງພວກເຮົາ,
ແລະ ເຫັນວ່າມັນມີຈຳນວນຫລວງຫລາຍ
ຈຶ່ງມີ [ກ]ຄວາມໂລບມາກຢາກໄດ້ມັນ, ເຖິງ
ຂະໜາດທີ່ລາວໄດ້ຈັບພວກເຮົາໂຍນອອກ
ໄປ, ແລ້ວສັ່ງໃຫ້ຄົນໃຊ້ຂອງລາວໃຫ້ມາຂ້າ
ພວກເຮົາ, ເພື່ອລາວຈະໄດ້ຊັບສົມບັດຂອງ
ພວກເຮົາ.
26 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກ ເຮົາ ໄດ້ໜີໄປຕໍ່ໜ້າຄົນໃຊ້ຂອງລາ
ບານ, ແລະ ພວກເຮົາຈຳເປັນຕ້ອງປະຖິ້ມ
ຊັບ ສົມບັດຂອງພວກ ເຮົາໄວ້ທາງຫລັງ,
ແລະ ມັນຈຶ່ງຕົກຢູ່ໃນກຳມືຂອງລາບານ.
27 ແລະ ເຫດການ ໄດ້ ບັງເກີດຂຶ້ນຄື
ພວກເຮົາໄດ້ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນ
ດານ, ແລະ ຄົນໃຊ້ຂອງລາບານຕິດຕາມ
ພວກເຮົາບໍ່ທັນ, ແລະ ພວກເຮົາໄດ້ລີ້ຊ່ອນ
ຕົວຢູ່ໃນຫວ່າງຫີນ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເລມັນໄດ້ໃຈຮ້າຍໃຫ້ຂ້າພະເຈົ້າ, ແລະ ໃຈ
ຮ້າຍໃຫ້ບິດາຂອງຂ້າພະເຈົ້ານຳອີກ; ແລະ
ເລມູເອນກໍໃຈຮ້າຍເໝືອນກັນເພາະລາວ
ເຊື່ອຟັງຄຳເວົ້າຂອງເລມັນ. ດັ່ງນັ້ນ ເລມັນ
ກັບເລມູເອນໄດ້ເວົ້າ [ກ]ຄຳຮຸນແຮງຕໍ່ພວກ
ເຮົາ, ຜູ້ເປັນນ້ອງຂອງພວກເຂົາ, ແລະ
ພວກເຂົາໄດ້ຕີພວກເຮົາດ້ວຍໄມ້.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຂະນະທີ່ພວກເຂົາກຳລັງຕີພວກເຮົາດ້ວຍ
ໄມ້ຢູ່ນັ້ນ, ຈົ່ງເບິ່ງ, [ກ]ທູດຂອງພຣະຜູ້ເປັນ
ເຈົ້າໄດ້ມາຢືນຢູ່ຕໍ່ໜ້າພວກເຂົາ, ແລະ
ເພິ່ນໄດ້ເວົ້າກັບພວກເຂົາ, ມີຄວາມວ່າ:
ເປັນຫຍັງພວກເຈົ້າຈຶ່ງຕີນ້ອງດ້ວຍໄມ້?
ພວກເຈົ້າບໍ່ຮູ້ຈັກບໍວ່າ ພຣະຜູ້ເປັນເຈົ້າໄດ້
ເລືອກລາວໃຫ້ເປັນ [ຂ]ຜູ້ປົກຄອງພວກເຈົ້າ,
ແລະ ອັນນີ້ ເພາະຄວາມຊົ່ວຮ້າຍຂອງພວກ
ເຈົ້າ? ຈົ່ງເບິ່ງ, ພວກເຈົ້າຈົ່ງກັບຂຶ້ນໄປເຢຣູ
ຊາເລັມອີກ, ແລະ ພຣະຜູ້ເປັນເຈົ້າຈະມອບ
ລາບານໃຫ້ຢູ່ໃນກຳມືຂອງພວກເຈົ້າ.
30 ແລະ ຫລັງຈາກ [ກ]ທູດໄດ້ເວົ້າກັບ
ພວກເຮົາແລ້ວ, ເພິ່ນກໍຈາກໄປ.
31 ແລະ ຫລັງຈາກທູດໄດ້ຈາກໄປແລ້ວ,
ເລມັນກັບເລມູເອນເລີ່ມຕົ້ນ [ກ]ຈົ່ມອີກ, ໂດຍ

22 *ກ* 1 ນຟ 2:4.
24 *ກ* 1 ນຟ 3:3.
25 *ກ* ຄມພ ໂລບ, ຄວາມໂລບ.
28 *ກ* 1 ນຟ 17:17–18.
29 *ກ* 1 ນຟ 4:3; 7:10.
ຄມພ ທູດ, ເທວະດາ.
*ຂ* 1 ນຟ 2:22.
30 *ກ* 1 ນຟ 16:38.
31 *ກ* ຄມພ ຈົ່ມ.

ກ່າວວ່າ: ມັນເປັນໄປໄດ້ແນວໃດ ທີ່ພຣະ
ຜູ້ເປັນເຈົ້າຈະມອບລາບານໃຫ້ຢູ່ໃນກຳມື
ຂອງພວກເຮົາ? ຈົ່ງເບິ່ງ, ລາວເປັນຄົນມີ
ອຳນາດ, ແລະ ລາວຍັງບັນຊາຄົນໄດ້ອີກ
ຫ້າສິບຄົນ, ແທ້ຈິງແລ້ວ, ເຖິງແມ່ນລາວຂ້າ
ຄົນໄດ້ເຖິງຫ້າສິບຄົນ; ແລ້ວເປັນຫຍັງຈະ
ຂ້າພວກເຮົາບໍ່ໄດ້?

## ບົດທີ 4

*ນີໄຟຂ້າລາບານໂດຍການບັນຊາຂອງ
ພຣະຜູ້ເປັນເຈົ້າ ແລະ ດ້ວຍກົນອຸບາຍຈຶ່ງ
ໄດ້ຮັບແຜ່ນຈາລຶກທອງເຫລືອງ ໄວ້ໃນ
ຄວາມຄອບຄອງ—ໂຊຣຳເລືອກເຂົ້າຮ່ວມ
ກັບຄອບຄົວຂອງລີໄຮໃນຖິ່ນແຫ້ງແລ້ງກັນ
ດານ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເວົ້າກັບພວກອ້າຍ, ມີຄວາມວ່າ:
ຂໍໃຫ້ພວກເຮົາຈົ່ງກັບຂຶ້ນໄປເຢຣູຊາເລັມ
ອີກ, ແລະ ຂໍໃຫ້ພວກເຮົາຈົ່ງ [ກ]ຊື່ສັດໃນ
ການຮັກສາພຣະບັນຍັດຂອງພຣະຜູ້ເປັນ
ເຈົ້າ; ເພາະຈົ່ງເບິ່ງ, ພຣະອົງມີອານຸພາບ
ຍິ່ງກວ່າຊາວໂລກທັງໝົດ, ແລ້ວເຫດໃດ
ຈະບໍ່ມີ [ຂ]ອານຸພາບຍິ່ງກວ່າລາບານກັບຄົນ
ຫ້າສິບຄົນຂອງລາວ, ແທ້ຈິງແລ້ວ, ເຖິງ
ແມ່ນຄົນນັບໝື່ນຂອງລາວ?
2 ສະນັ້ນ ຂໍໃຫ້ພວກເຮົາຂຶ້ນໄປ; ຂໍໃຫ້
ພວກເຮົາຈົ່ງ [ກ]ເຂັ້ມແຂງເໝືອນດັ່ງ [ຂ]ໂມເຊ;
ເພາະເພິ່ນໄດ້ເວົ້າກັບນ້ຳ [ຄ]ທະເລແດງແທ້ໆ
ແລະ ນ້ຳກໍໄດ້ແຍກອອກໄປທາງນັ້ນທາງນີ້,
ແລະ ບັນພະບຸລຸດຂອງພວກເຮົາໄດ້ເດີນ
ຜ່ານມາເທິງແຜ່ນດິນແຫ້ງອອກຈາກການ
ເປັນຊະເລີຍ, ແລະ ກອງທັບຂອງຟາຣາໂອ
ໄດ້ຕາມມາ ແລະ ຈົມຢູ່ໃນນ້ຳທະເລແດງນັ້ນ
3 ບັດນີ້ຈົ່ງເບິ່ງ ພວກເຈົ້າຮູ້ວ່າເລື່ອງນີ້ມີ
ຈິງ; ແລະ ພວກເຈົ້າຮູ້ອີກວ່າ [ກ]ທູດໄດ້ເວົ້າ
ກັບພວກເຈົ້າແລ້ວ; ດັ່ງນັ້ນ ດ້ວຍເຫດໃດ
ພວກເຈົ້າຈຶ່ງສົງໃສອີກ? ຂໍໃຫ້ພວກເຮົາຂຶ້ນ
ໄປ; ພຣະຜູ້ເປັນເຈົ້າສາມາດປົດປ່ອຍພວກ
ເຮົາໄດ້, ເຖິງແມ່ນ ເໝືອນດັ່ງບັນພະບຸລຸດ
ຂອງພວກເຮົາ, ແລະ ທຳລາຍລາບານໄດ້,
ເຖິງແມ່ນເໝືອນດັ່ງຊາວເອຢິບ.
4 ແລ້ວເມື່ອຂ້າພະເຈົ້າເວົ້າຄຳເຫລົ່ານີ້,
ພວກເຂົາຍັງຄຽດແຄ້ນ, ແລະ ຍັງຈົ່ມຢູ່ຕໍ່
ໄປ; ເຖິງຢ່າງໃດກໍຕາມ ພວກເຂົາຍັງໄດ້
ຕິດຕາມຂ້າພະເຈົ້າຂຶ້ນມາ ຈົນພວກເຮົາມາ
ເຖິງນອກກຳແພງເມືອງເຢຣູຊາເລັມ.
5 ແລະ ມັນເປັນຕອນກາງຄືນ; ແລະ ຂ້າ
ພະເຈົ້າໄດ້ໃຫ້ພວກເຂົາລີ້ຢູ່ນອກກຳແພງ.
ແລະ ຫລັງຈາກພວກເຂົາລີ້ແລ້ວ, ຂ້າພະ
ເຈົ້ານີໄຟກໍຫລົບຫລີກເຂົ້າໄປໃນເມືອງ
ແລະ ມຸ້ງໜ້າໄປທີ່ບ້ານຂອງລາບານ.
6 ແລະ ພຣະວິນຍານໄດ້ [ກ]ນຳຂ້າພະເຈົ້າ
ໄປ, ໂດຍບໍ່ [ຂ]ຮູ້ລ່ວງໜ້າເຖິງສິ່ງທີ່ຂ້າພະ
ເຈົ້າຄວນຈະເຮັດ.
7 ເຖິງຢ່າງໃດກໍຕາມ ຂ້າພະເຈົ້າກໍເຂົ້າ
ໄປ, ແລະ ເມື່ອຂ້າພະເຈົ້າມາຮອດໃກ້ບ້ານ
ຂອງລາບານ, ຂ້າພະເຈົ້າເຫັນຊາຍຄົນ
ໜຶ່ງ, ແລະ ລາວລົ້ມລົງຢູ່ກັບພື້ນດິນຕໍ່ໜ້າ
ຂ້າພະເຈົ້າ, ເພາະລາວເມົາເຫລົ້າອະງຸ່ນ.
8 ແລະ ເມື່ອຂ້າພະເຈົ້າເຂົ້າໄປໃກ້ກໍພົບ
ວ່າລາວຄືລາບານ.
9 ແລະ ຂ້າພະເຈົ້າເຫັນ [ກ]ດາບຂອງລາວ,
ແລະ ຂ້າພະເຈົ້າດຶງມັນອອກຈາກຝັກ;

**4** 1*ກ* ຄມພ ກ້າຫານ, ຄວາມກ້າ
ຫານ, ຢ່າງກ້າຫານ; ສັດທາ.
*ຂ* 1 ນຟ 7:11–12.
2*ກ* ພບຍ 11:8.
*ຂ* ຄມພ ໂມເຊ.
*ຄ* ອພຍ 14:21;
1 ນຟ 17:26; ມຊຢ 7:19.
3*ກ* 1 ນຟ 3:29–31; 7:10.
6*ກ* ຄມພ ດົນໃຈ, ການດົນ
ໃຈ; ພຣະວິນຍານບໍລິສຸດ.
*ຂ* ຮຣ 11:8.
9*ກ* 2 ນຟ 5:14; ຄພ 17:1.

ແລະ ດ້າມຂອງມັນເປັນຄຳສົດ, ແລະ ຝີມື
ອັນປານີດທີ່ສຸດ, ແລະ ຂ້າພະເຈົ້າເຫັນວ່າ
ໃບດາບເຮັດດ້ວຍເຫລັກທີ່ມີຄ່າສູງທີ່ສຸດ.
10 ແລະ ເຫດການ ໄດ້ບັງ ເກີດຂຶ້ນຄື
ພຣະວິນຍານ [ກ]ກະຕຸ້ນຂ້າພະເຈົ້າໃຫ້ຂ້າ
ລາບານສາ, ແຕ່ຂ້າພະເຈົ້າຄິດຢູ່ໃນໃຈ
ວ່າ: ຂ້າພະເຈົ້າບໍ່ເຄີຍເຮັດໃຫ້ຄົນໃດເສຍ
ເລືອດເນື້ອຈັກເທື່ອ. ແລະ ຂ້າພະເຈົ້າຈຶ່ງ
ຢຸດສະຫງັກບໍ່ຢາກຂ້າລາວ.
11 ແລະ ພຣະວິນຍານກ່າວກັບຂ້າພະ
ເຈົ້າວ່າ: ຈົ່ງເບິ່ງ [ກ]ພຣະຜູ້ເປັນເຈົ້າມອບ
ລາວໃຫ້ຢູ່ໃນກຳມືຂອງເຈົ້າ. ແທ້ຈິງແລ້ວ,
ຂ້າພະເຈົ້າຮູ້ວ່າ ລາວພະຍາຍາມເອົາຊີວິດ
ຂອງຂ້າພະເຈົ້າຢູ່ແລ້ວ; ແທ້ຈິງແລ້ວ, ລາວ
ບໍ່ຍອມເຊື່ອຟັງພຣະບັນຍັດຂອງພຣະຜູ້
ເປັນເຈົ້າ; ແລະ ລາວຍັງ [ຂ]ເອົາຊັບສົມບັດ
ຂອງພວກເຮົາໄປນຳອີກ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະວິນຍານໄດ້ກ່າວກັບຂ້າພະເຈົ້າອີກ
ວ່າ: ຈົ່ງຂ້າລາວສາ, ເພາະພຣະຜູ້ເປັນເຈົ້າ
ມອບລາວໃຫ້ຢູ່ໃນກຳມືຂອງເຈົ້າແລ້ວ;
13 ຈົ່ງເບິ່ງ ພຣະຜູ້ເປັນເຈົ້າ [ກ]ຂ້າ [ຂ]ຄົນ
ຊົ່ວເພື່ອນຳເອົາຈຸດປະສົງອັນຊອບທຳຂອງ
ພຣະອົງມາ. ການທີ່ຄົນຜູ້ດຽວຕາຍກໍ [ຄ]ດີ
ກວ່າປະຊາຊາດຈະເສື່ອມໂຊມ ແລະ ຕາຍ
ຢູ່ໃນຄວາມບໍ່ເຊື່ອຖື.
14 ແລະ ບັດນີ້, ເມື່ອຂ້າພະເຈົ້ານີໄຟ
ໄດ້ຂໍ້ຄວາມນີ້, ຂ້າພະເຈົ້ານຶກເຖິງພຣະ
ຄຳຂອງພຣະຜູ້ເປັນເຈົ້າ ຊຶ່ງໄດ້ຮັບສັ່ງກັບ
ຂ້າພະເຈົ້າໃນຖິ່ນແຫ້ງແລ້ງກັນດານ, ທີ່ມີ
ຄວາມວ່າ: [ກ]ຕາບໃດທີ່ລູກຫລານຂອງເຈົ້າ
ຈະ [ຂ]ຮັກສາບັນຍັດຂອງເຮົາ, ພວກເຂົາຈະ
[ຄ]ຮຸ່ງເຮືອງຢູ່ໃນ [ງ]ແຜ່ນດິນແຫ່ງຄຳສັນຍາ.
15 ແທ້ຈິງແລ້ວ, ຂ້າພະເຈົ້າຄິດອີກວ່າ
ພວກເຂົາຈະຮັກສາພຣະບັນຍັດຂອງພຣະ
ຜູ້ເປັນເຈົ້າຕາມກົດຂອງໂມເຊບໍ່ໄດ້, ນອກ
ຈາກພວກເຂົາຈະມີກົດບັງຄັບ.
16 ແລະ ຂ້າພະເຈົ້າຮູ້ອີກວ່າ [ກ]ກົດໄດ້
ຈາລຶກຢູ່ໃນແຜ່ນຈາລຶກທອງເຫລືອງນັ້ນ.
17 ແລະ ຂ້າພະເຈົ້າຮູ້ອີກວ່າ ພຣະຜູ້ເປັນ
ເຈົ້າມອບລາບານໃຫ້ຢູ່ໃນກຳມືຂອງຂ້າພະ
ເຈົ້າ ເພາະເຫດນີ້—ເພື່ອຂ້າພະເຈົ້າຈະໄດ້
ຮັບບັນທຶກຕາມພຣະບັນຍັດຂອງພຣະອົງ.
18 ສະນັ້ນ ຂ້າພະເຈົ້າໄດ້ເຊື່ອຟັງສຽງ
ຮຽກຮ້ອງຂອງພຣະວິນຍານ, ແລະ ຂ້າພະ
ເຈົ້າຈັບລາບານໂດຍລວບຜົມຂອງລາວ,
ແລະ ຕັດຫົວຂອງລາວ ດ້ວຍ [ກ]ດາບຂອງ
ລາວເອງ.
19 ແລະ ຫລັງຈາກຂ້າພະເຈົ້າໄດ້ຕັດຫົວ
ຂອງລາວດ້ວຍດາບຂອງລາວເອງແລ້ວ,
ຂ້າພະເຈົ້າກໍເອົາເຄື່ອງແຕ່ງກາຍຂອງລາ
ບານມາສວມໃສ່ຕົວຂອງຂ້າພະເຈົ້າເອງ;
ແທ້ຈິງແລ້ວ, ແມ່ນທຸກຊິ້ນສ່ວນ; ແລະ ຂ້າ
ພະເຈົ້າໄດ້ຄາດເກາະເຄື່ອງປ້ອງກັນຂອງ
ລາວໄວ້ຮອບແອວ.
20 ແລະ ຫລັງຈາກຂ້າພະເຈົ້າປ່ຽນເຄື່ອງ
ແລ້ວ, ຂ້າພະເຈົ້າຈຶ່ງໄປຫາຄັງສົມບັດຂອງ
ລາບານ. ແລະ ໃນຂະນະທີ່ຂ້າພະເຈົ້າມຸ້ງ
ໜ້າໄປຫາຄັງສົມບັດຂອງລາບານຢູ່ນັ້ນ,
ຈົ່ງເບິ່ງ, ຂ້າພະເຈົ້າເຫັນ [ກ]ຄົນໃຊ້ຂອງລາ
ບານຜູ້ຖືກະແຈຄັງສົມບັດ. ແລະ ຂ້າພະ
ເຈົ້າໄດ້ບັນຊາລາວດ້ວຍສຽງຂອງລາບານ

10 ກ ແອວ 14:11.
11 ກ 1 ຊມອ 17:41–49.
ຂ 1 ນຟ 3:26.
13 ກ 1 ນຟ 17:33–38; ຄພ 98:31–32.
ຂ ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
ຄ ແອວ 30:47.
14 ກ ອນນ 1:6; ມຊຢ 2:22; ອທ 2:7–12.
ຂ ຄມພ ພຣະບັນຍັດຂອງພຣະເຈົ້າ.
ຄ 1 ນຟ 2:20.
ງ 1 ນຟ 17:13–14; ຢຄ 2:12.
16 ກ ຄມພ ກົດຂອງໂມເຊ.
18 ກ 1 ຊມອ 17:51.
20 ກ 2 ນຟ 1:30.

ໃຫ້ລາວເຂົ້າໄປໃນຄັງສົມບັດກັບຂ້າພະ
ເຈົ້າ.

21 ແລະ ລາວຄິດວ່າ ຂ້າພະເຈົ້າເປັນລາ
ບານນາຍຂອງລາວ, ເພາະເຫັນເຄື່ອງແຕ່ງ
ກາຍ ກັບດາບທີ່ຄາດຢູ່ ແອວ ຂອງຂ້າພະ
ເຈົ້າ.

22 ແລະ ລາວກໍໄດ້ສົນທະນາກັບຂ້າພະ
ເຈົ້າກ່ຽວກັບພວກຜູ້ອາວຸໂສຂອງຊາວຢິວ,
ໂດຍຮູ້ວ່າລາບານນາຍຂອງລາວ, ອອກໄປ
ຢູ່ໃນບັນດາຄົນເຫລົ່ານັ້ນຕອນກາງຄືນ.

23 ແລະ ຂ້າພະເຈົ້າໄດ້ເວົ້າກັບລາວ
ເໝືອນກັບວ່າເປັນລາບານແທ້ໆ.

24 ແລະ ຂ້າພະເຈົ້າໄດ້ເວົ້າກັບລາວອີກ
ວ່າ ຂ້າພະເຈົ້າຈະເອົາອັກຂະລະ, ຊຶ່ງຢູ່ໃນ
[ກ]ແຜ່ນຈາລຶກທອງເຫລືອງ ໄປໃຫ້ພວກ
ອ້າຍຂອງຂ້າພະເຈົ້າ, ຜູ້ຢູ່ນອກກຳແພງ.

25 ແລະ ຂ້າພະເຈົ້າຂໍໃຫ້ລາວຕິດຕາມ
ຂ້າພະເຈົ້າອອກໄປນຳ.

26 ແລະ ລາວໂດຍທີ່ຄິດວ່າຂ້າພະເຈົ້າ
ເວົ້າເຖິງພີ່ນ້ອງຮ່ວມສາດສະໜາຈັກ, ແລະ
ຄິດວ່າຂ້າພະເຈົ້າເປັນລາບານແທ້ໆ ຊຶ່ງຂ້າ
ພະເຈົ້າຂ້າເສຍແລ້ວ, ດັ່ງນັ້ນ ລາວຈຶ່ງໄດ້
ຕິດຕາມຂ້າພະເຈົ້າໄປ.

27 ແລະ ຂະນະທີ່ຂ້າພະເຈົ້າກຳລັງອອກ
ໄປຫາພວກອ້າຍຂອງຂ້າພະເຈົ້າຊຶ່ງຢູ່ນອກ
ກຳແພງ, ລາວກໍຍັງເວົ້າກັບຂ້າພະເຈົ້າ
ຫລາຍໆເທື່ອກ່ຽວກັບພວກຜູ້ອາວຸໂສຂອງ
ຊາວຢິວ.

28 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ເລມັນ ເຫັນຂ້າພະເຈົ້າ ກໍຕົກໃຈຢ່າງຍິ່ງ,
ແລະ ເລມູເອນກັບແຊມກໍເໝືອນກັນ. ແລະ
ພວກເຂົາໄດ້ໜີໄປຕໍ່ໜ້າຂອງຂ້າພະເຈົ້າ;
ເພາະພວກເຂົາຄິດວ່າ ຂ້າພະເຈົ້າເປັນລາ
ບານ, ແລະ ຄິດວ່າລາວໄດ້ຂ້າຂ້າພະເຈົ້າ
ເສຍແລ້ວ ແລະ ພະຍາຍາມຈະເອົາຊີວິດ
ຂອງພວກເຂົານຳອີກ.

29 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າເອີ້ນພວກເຂົາ, ແລະ ພວກເຂົາໄດ້
ຍິນສຽງຂອງຂ້າພະເຈົ້າ; ດັ່ງນັ້ນ ພວກເຂົາ
ຈຶ່ງໄດ້ຢຸດໜີຈາກຂ້າພະເຈົ້າ.

30 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເມື່ອຄົນໃຊ້ຂອງລາບານເຫັນພວກອ້າຍ
ຂອງຂ້າພະເຈົ້າ, ລາວກໍເລີ່ມຕົວສັ່ນ ແລະ
ເກືອບໜີໄປຕໍ່ໜ້າຂ້າພະເຈົ້າ ແລະ ກັບໄປ
ນະຄອນເຢຣູຊາເລັມ.

31 ແລະ ບັດນີ້ຂ້າພະເຈົ້ານີໄຟໂດຍທີ່
ເປັນຄົນຮ່າງກາຍສູງໃຫຍ່, ແລະ ໂດຍທີ່
ໄດ້ຮັບ [ກ]ກຳລັງມະຫາສານຈາກພຣະຜູ້
ເປັນເຈົ້ານຳອີກ, ສະນັ້ນ ຂ້າພະເຈົ້າຈຶ່ງ
ໄດ້ເຂົ້າຈັບຄົນໃຊ້ຂອງລາບານ, ແລະ ຍຶດ
ລາວໄວ້, ເພື່ອບໍ່ໃຫ້ລາວໜີໄປ.

32 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເວົ້າກັບລາວ, ວ່າຖ້າຫາກລາວ
ຈະເຊື່ອຟັງຄຳເວົ້າຂອງຂ້າພະເຈົ້າ, ຕາບ
ໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່, ຕາບ
ໃດທີ່ຂ້າພະເຈົ້າຍັງມີຊີວິດຢູ່, ຖ້າຫາກລາວ
ຈະເຊື່ອຟັງຄຳເວົ້າຂອງພວກເຮົາ, ພວກ
ເຮົາກໍຈະໄວ້ຊີວິດລາວ.

33 ແລະ ຂ້າພະເຈົ້າໄດ້ເວົ້າກັບລາວ
ດ້ວຍ [ກ]ຄຳສາບານ, ວ່າບໍ່ຕ້ອງຢ້ານ; ລາວ
ຈະເປັນອິດສະລະຄືກັນກັບພວກເຮົາ ຖ້າ
ຫາກລາວຈະລົງໄປໃນຖິ່ນແຫ້ງແລ້ງກັນ
ດານກັບພວກເຮົາ.

34 ແລະ ຂ້າພະເຈົ້າໄດ້ເວົ້າກັບລາວອີກ,
ມີຄວາມວ່າ: ພຣະຜູ້ເປັນເຈົ້າໄດ້ [ກ]ບັນຊາ
ໃຫ້ພວກເຮົາເຮັດສິ່ງນີ້ແທ້ໆ; ແລະ ພວກ
ເຮົາຈະບໍ່ພາກພຽນໃນການຮັກສາພຣະບັນ
ຍັດຂອງພຣະຜູ້ເປັນເຈົ້າບໍ? ສະນັ້ນ, ຖ້າ

24 *ກ* 1 ນຟ 3:12, 19–24; 5:10–22.
31 *ກ* ມຊຍ 9:17; ແອວ 56:56.
33 *ກ* ຄມພ ຄຳສາບານ.
34 *ກ* 1 ນຟ 2:2; 3:16.

ຫາກ ເຈົ້າ ຈະ ລົງ ໄປ ຫາ ບິດາ ຂອງ ຂ້າ ພະ
ເຈົ້າໃນຖິ່ນແຫ້ງແລ້ງກັນດານ, ເຈົ້າກໍຈະມີ
ສ່ວນກັບພວກເຮົາ.
35 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
[ກ]ໂຊຣໍາໄດ້ມີກໍາລັງໃຈຂຶ້ນຈາກຄໍາເວົ້າທີ່ຂ້າ
ພະເຈົ້າໄດ້ເວົ້າໄປແລ້ວ. ບັດນີ້ໂຊຣໍາຄືຊື່
ຂອງຄົນໃຊ້; ແລະ ລາວສັນຍາວ່າ ລາວຈະ
ລົງໄປຫາບິດາຂອງຂ້າພະເຈົ້າໃນຖິ່ນແຫ້ງ
ແລ້ງກັນດານ. ແທ້ຈິງແລ້ວ, ແລະ ລາວໄດ້
ໃຫ້ຄໍາສາບານກັບພວກເຮົາອີກວ່າ ລາວ
ຈະຢູ່ກັບພວກເຮົານັບແຕ່ເວລານັ້ນເປັນ
ຕົ້ນໄປ.
36 ແລ້ວພວກເຮົາປາດຖະໜາຢາກໃຫ້
ລາວຢູ່ກັບພວກເຮົາເພາະເຫດນີ້, ຄືຊາວ
ຢິວຈະບໍ່ຮູ້ຈັກກ່ຽວກັບການໜີໄປຫາຖິ່ນ
ແຫ້ງແລ້ງກັນດານຂອງພວກເຮົາ, ຢ້ານ
ວ່າພວກເຂົາຈະໄລ່ຕາມມາ ແລະ ທໍາຮ້າຍ
ພວກເຮົາ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ໂຊຣໍາ ໄດ້ ໃຫ້ [ກ]ຄໍາສາບານ ກັບ ພວກ ເຮົາ
ແລ້ວ, ຄວາມຢ້ານກົວຂອງພວກເຮົາກ່ຽວ
ກັບລາວກໍໝົດໄປ.
38 ແ ລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກ ເຮົາ ນໍາ ແຜ່ນ ຈາລຶກ ທອງ ເຫລືອງ
ແລະ ຄົນໃຊ້ຂອງລາບານ, ແລະ ອອກໄປ
ໃນຖິ່ນແຫ້ງແລ້ງກັນດານ, ແລະ ເດີນທາງ
ໄປຫາຜ້າເຕັ້ນຂອງບິດາຂອງພວກເຮົາ.

## ບົດທີ 5

*ຊາໄຣຢາຈົ່ມໃຫ້ລີໄຮ—ທັງສອງປິຕິຍິນດີໃນການກັບມາຂອງພວກລູກຊາຍຂອງເຂົາເຈົ້າ—ເຂົາເຈົ້າຖວາຍເຄື່ອງບູຊາ—ແຜ່ນຈາລຶກທອງເຫລືອງບັນຈຸການບັນທຶກຂອງໂມເຊ ແລະ ສາດສະດາຄົນອື່ນໆ—ລີໄຮເປັນຜູ້ສືບຕະກຸນຂອງໂຢເຊັບ—ລີໄຮທໍານາຍກ່ຽວກັບລູກຫລານຂອງເພິ່ນ ແລະ ກ່ຽວກັບການຮັກສາແຜ່ນຈາລຶກໄວ້. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກພວກເຮົາລົງມາຫາບິດາຂອງພວກ
ເຮົາ ໃນ ຖິ່ນ ແຫ້ງ ແລ້ງ ກັນ ດານ, ຈົ່ງເບິ່ງ,
ເພິ່ນເຕັມໄປດ້ວຍຄວາມປິຕິຍິນດີ, ແລະ
[ກ]ຊາໄຣຢາແມ່ຂອງຂ້າພະເຈົ້າກໍດີໃຈຢ່າງ
ຍິ່ງ, ເພາະເພິ່ນໄດ້ເປັນທຸກເພາະພວກເຮົາ
ແທ້ໆ.
2 ເພາະເພິ່ນຄິດວ່າພວກເຮົາຕາຍເສຍ
ແລ້ວໃນຖິ່ນແຫ້ງແລ້ງກັນດານ; ແລະ ເພິ່ນ
ໄດ້ ຈົ່ມ ໃຫ້ ບິດາ ຂອງຂ້າພະ ເຈົ້ານໍາອີກ,
ໂດຍບອກເພິ່ນວ່າ ເພິ່ນເປັນຄົນຊ່າງເຫັນ
ພາບ; ມີຄວາມວ່າ: ຈົ່ງເບິ່ງ ເຈົ້ານໍາພວກ
ເຮົາອອກມາຈາກແຜ່ນດິນ ຊຶ່ງເປັນມູນມໍ
ລະດົກຂອງພວກເຮົາ, ແລະ ຂ້ອຍໄດ້ເສຍ
ລູກຊາຍໄປໝົດແລ້ວ, ແລະ ພວກເຮົາກໍາ
ລັງຈະຕາຍຢູ່ໃນຖິ່ນແຫ້ງແລ້ງກັນດານ.
3 ແລະ ດ້ວຍພາສາຢ່າງນີ້ທີ່ມານດາ
ຂອງຂ້າພະເຈົ້າໄດ້ຈົ່ມໃຫ້ບິດາຂອງຂ້າພະ
ເຈົ້າ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ບິດາ
ຂອງຂ້າພະເຈົ້າໄດ້ເວົ້າກັບເພິ່ນ, ມີຄວາມ
ວ່າ: ຂ້ອຍຮູ້ວ່າຂ້ອຍເປັນຄົນຊ່າງ [ກ]ເຫັນ
ພາບ; ເພາະຖ້າຫາກຂ້ອຍບໍ່ເຫັນເລື່ອງ
ຕ່າງໆຂອງພຣະເຈົ້າໃນ [ຂ]ພາບແລ້ວ ຂ້ອຍ

35*ກ* 1 ນຟ 16:7; 2 ນຟ 5:5–6. ຄມພ ໂຊຣໍາ, ຊາວໂຊຣໍາ.
37*ກ* ຢຊ 9:1–21; ປຍຈ 5:4. ຄມພ ຄໍາສາບານ.
**5** 1*ກ* ຄມພ ຊາໄຣຢາ.
4*ກ* 1 ນຟ 2:11.
*ຂ* 1 ນຟ 1:8–13. ຄມພ ພາບນິມິດ.

ຈະບໍ່ຮູ້ຈັກພຣະກະລຸນາທິຄຸນຂອງພຣະ
ເຈົ້າ, ແຕ່ຈະຍັງຢູ່ທີ່ເຢຣູຊາເລັມ, ແລະ
ຕາຍກັບພີ່ນ້ອງຂອງຂ້ອຍ.
5 ແຕ່ຈົ່ງເບິ່ງ, ຂ້ອຍໄດ້ຮັບ [ກ]ແຜ່ນດິນ
ແຫ່ງຄຳສັນຍາ, ຊຶ່ງໃນສິ່ງນີ້ຂ້ອຍປິຕິຍິນ
ດີ; ແທ້ຈິງແລ້ວ, ແລະ ຂ້ອຍ [ຂ]ຮູ້ວ່າ ພຣະ
ຜູ້ເປັນເຈົ້າຈະປົດປ່ອຍພວກລູກຊາຍຂອງ
ຂ້ອຍໃຫ້ພົ້ນຈາກກຳມືຂອງລາບານ, ແລະ
ນຳພວກເຂົາລົງມາຫາພວກເຮົາໃນຖິ່ນ
ແຫ້ງແລ້ງກັນດານອີກ.
6 ແລະ ດ້ວຍພາສາຢ່າງນີ້, ລີໄຮບິດາ
ຂອງຂ້າພະເຈົ້າໄດ້ປອບໃຈຊາໄຣຢາ
ມານດາຂອງຂ້າພະເຈົ້າກ່ຽວກັບ ພວກເຮົາ
ໃນຂະນະທີ່ພວກເຮົາເດີນທາງຢູ່ໃນຖິ່ນ
ແຫ້ງແລ້ງກັນດານຂຶ້ນໄປຫາແຜ່ນດິນເຢຣູ
ຊາເລັມ ເພື່ອເອົາບັນທຶກຂອງຊາວຢິວ.
7 ແລະ ເມື່ອພວກເຮົາກັບມາເຖິງຜ້າເຕັ້ນ
ຂອງບິດາຂອງຂ້າພະເຈົ້າແລ້ວ, ຈົ່ງເບິ່ງ,
ພວກເພິ່ນກໍເຕັມໄປດ້ວຍຄວາມປິຕິຍິນດີ,
ແລະ ມານດາຂອງຂ້າພະເຈົ້າກໍສະບາຍໃຈ
ຂຶ້ນ.
8 ແລະ ເພິ່ນໄດ້ເວົ້າ, ມີຄວາມວ່າ: ບັດ
ນີ້ຂ້ອຍຮູ້ແນ່ນອນວ່າ ພຣະຜູ້ເປັນເຈົ້າໄດ້
[ກ]ບັນຊາສາມີຂອງຂ້ອຍໃຫ້ໜີມາໃນຖິ່ນ
ແຫ້ງແລ້ງກັນດານ; ແທ້ຈິງແລ້ວ, ແລະ
ຂ້ອຍຮູ້ເຖິງຄວາມແນ່ນອນອີກວ່າ ພຣະຜູ້
ເປັນເຈົ້າປົກປ້ອງພວກລູກຊາຍຂອງຂ້ອຍ,
ແລະ ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມື
ຂອງລາບານ, ແລະ ປະທານອຳນາດໃຫ້
ພວກເຂົາເພື່ອຈະ [ຂ]ສຳເລັດໃນສິ່ງທີ່ພຣະ
ຜູ້ເປັນເຈົ້າບັນຊາພວກເຂົາ. ແລະ ເພິ່ນໄດ້
ເວົ້າດ້ວຍພາສາຢ່າງນີ້.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ທັງສອງມີຄວາມປິຕິຍິນດີຢ່າງຍິ່ງ, ແລະ
ໄດ້ຖວາຍ [ກ]ເຄື່ອງບູຊາ ແລະ ເຄື່ອງເຜົາແດ່
ພຣະຜູ້ເປັນເຈົ້າ; ແລະ ພວກເພິ່ນໄດ້ຖວາຍ
[ຂ]ຄວາມຂອບພຣະຄຸນແດ່ພຣະເຈົ້າຂອງ
ອິດສະຣາເອນ.
10 ແລະ ຫລັງຈາກພວກເພິ່ນຖວາຍ
ຄວາມຂອບພຣະຄຸນແດ່ພຣະເຈົ້າຂອງ
ອິດສະຣາເອນແລ້ວ, ລີໄຮບິດາຂອງຂ້າ
ພະເຈົ້າໄດ້ຈັບເອົາບັນທຶກ ຊຶ່ງຈາລຶກໄວ້ໃນ
[ກ]ແຜ່ນຈາລຶກທອງເຫລືອງຂຶ້ນມາ, ແລະ
ເພິ່ນໄດ້ຄົ້ນຄວ້າມັນຕັ້ງແຕ່ຕົ້ນ.
11 ແລະ ເພິ່ນເຫັນວ່າມັນປະກອບດ້ວຍ
[ກ]ໜັງສືຫ້າເຫລັ້ມຂອງໂມເຊ, ຊຶ່ງໃຫ້ເລື່ອງ
ລາວເຖິງການສ້າງໂລກ, ແລະ ເຖິງອາດາມ
ແລະ ເອວາຜູ້ເປັນບິດາມານດາຜູ້ທຳອິດ
ຂອງພວກເຮົານຳອີກ;
12 ແລະ [ກ]ບັນທຶກຂອງຊາວຢິວຕັ້ງແຕ່ຕົ້ນ,
ຈົນລົງມາເຖິງໄລຍະເລີ່ມຕົ້ນການປົກຄອງ
ຂອງເຊເດກີຢາ, ກະສັດແຫ່ງຢູດານຳອີກ;
13 ແລະ ຄຳທຳນາຍຂອງສາດສະດາຜູ້
ບໍລິສຸດ, ຕັ້ງແຕ່ຕົ້ນ, ຈົນລົງມາເຖິງໄລຍະ
ເລີ່ມຕົ້ນການປົກຄອງຂອງ [ກ]ເຊເດກີຢາ
ນຳອີກ; ແລະ ຄຳທຳນາຍຫລາຍຂໍ້ ຊຶ່ງເວົ້າ
ດ້ວຍປາກຂອງ [ຂ]ເຢເຣມີຢາ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື,

5 ກ 1 ນຟ 2:20; 18:8, 22–23. ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
ຂ ຄມພ ສັດທາ.
8 ກ 1 ນຟ 2:2.
ຂ 1 ນຟ 3:7.
9 ກ ມຊຢ 2:3; 3 ນຟ 9:19–20. ຄມພ ກົດຂອງໂມເຊ.
ຂ ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
10 ກ 1 ນຟ 4:24, 38; 13:23. ຄມພ ແຜ່ນຈາລຶກທອງເຫລືອງ.
11 ກ 1 ນຟ 19:23. ຄມພ ເພັນຕາຕຸກ.
12 ກ 1 ຂຄ 9:1. ຄມພ ພຣະຄຳພີ.
13 ກ 2 ກສ 24:18; ຢມຢ 37:1.
ຂ ອຊຣ 1:1; ຢມຢ 36:17–32; 1 ນຟ 7:14; ຣລມ 8:20.

ລີໄຮ ບິດາ ຂອງ ຂ້າພະ ເຈົ້າ ໄດ້ ພົບ ລຳ ດັບ
ການ ສືບ ເຊື້ອສາຍ ຂອງ ບັນພະບຸລຸດ ຂອງ
ເພິ່ນ ໃນ [ກ]ແຜ່ນ ຈາລຶກ ທອງ ເຫລືອງ ນຳ
ອີກ. ດັ່ງນັ້ນ, ເພິ່ນຈຶ່ງຮູ້ວ່າ ເພິ່ນເປັນຜູ້ສືບ
ຕະກຸນຂອງ [ຂ]ໂຢເຊັບ; ແທ້ຈິງແລ້ວ, ແມ່ນ
ໂຢເຊັບຜູ້ທີ່ເປັນລູກຊາຍຂອງ [ຄ]ຢາໂຄບ
ຄົນທີ່ຖືກ [ງ]ຂາຍໄປຫາເອຢິບ, ແລະ ເປັນຜູ້
ທີ່ໄດ້ຮັບການບຳລຸງ [ຈ]ຮັກສາໂດຍພຣະຫັດ
ຂອງພຣະຜູ້ເປັນເຈົ້າ, ເພື່ອລາວຈະໄດ້ບຳ
ລຸງຮັກສາຢາໂຄບ, ຜູ້ເປັນບິດາຂອງລາວ,
ແລະ ຄອບຄົວຂອງເພິ່ນທັງໝົດໃຫ້ພົ້ນ
ຈາກຄວາມຕາຍດ້ວຍຄວາມອຶດຢາກ.
15 ແລະ ພຣະເຈົ້າອົງດຽວກັນນັ້ນ ຜູ້ບຳ
ລຸງຮັກສາພວກເຂົາ, ໄດ້ [ກ]ນຳພວກເຂົາໃຫ້
ພົ້ນຈາກການເປັນຊະເລີຍ ແລະ ໃຫ້ພົ້ນ
ຈາກແຜ່ນດິນເອຢິບ.
16 ແລະ ລີໄຮ ບິດາຂອງຂ້າພະເຈົ້າໄດ້
ຄົ້ນພົບລຳດັບການສືບເຊື້ອສາຍຂອງບັນ
ພະບຸລຸດຂອງເພິ່ນ. ແລະ ລາບານກໍເປັນ
ຜູ້ສືບຕະກຸນຂອງ [ກ]ໂຢເຊັບເໝືອນກັນ, ດັ່ງ
ນັ້ນ ລາບານ ແລະ ບັນພະບຸລຸດຂອງເພິ່ນ
ຈຶ່ງໄດ້ຮັກສາບັນທຶກນີ້ໄວ້.
17 ແລະ ບັດນີ້ເມື່ອບິດາຂອງຂ້າພະເຈົ້າ
ເຫັນສິ່ງເຫລົ່ານີ້ທັງໝົດ, ເພິ່ນກໍເຕັມໄປ
ດ້ວຍພຣະວິນຍານ, ແລະ ເລີ່ມທຳນາຍ
ກ່ຽວກັບລູກຫລານຂອງເພິ່ນ—
18 ວ່າແຜ່ນຈາລຶກທອງເຫລືອງເຫລົ່ານີ້
ຈະເຂົ້າໄປຫາທຸກປະຊາຊາດ, ທຸກຕະກຸນ,
ທຸກພາສາ, ແລະ ທຸກຜູ້ຄົນທັງປວງ ຜູ້ເປັນ
ລູກຫລານຂອງເພິ່ນ.
19 ດັ່ງນັ້ນ, ເພິ່ນກ່າວວ່າ ແຜ່ນຈາລຶກ
ທອງເຫລືອງເຫລົ່ານີ້ຈະບໍ່ຖືກທຳລາຍ
[ກ]ເລີຍ; ທັງຈະບໍ່ມົວໝອງຕໍ່ໄປອີກໂດຍກາ
ລະເວລາ. ແລະ ເພິ່ນໄດ້ທຳນາຍໄວ້ຫລາຍ
ເລື່ອງກ່ຽວກັບລູກຫລານຂອງເພິ່ນ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ຈົນ
ເຖິງເວລານີ້ ຂ້າພະເຈົ້າກັບບິດາຂອງຂ້າ
ພະເຈົ້າໄດ້ຮັກສາພຣະບັນຍັດດັ່ງທີ່ພຣະຜູ້
ເປັນເຈົ້າບັນຊາພວກເຮົາ.
21 ແລະ ພວກເຮົາໄດ້ຮັບບັນທຶກຊຶ່ງ
ພຣະຜູ້ເປັນເຈົ້າບັນຊາພວກເຮົາ, ແລະ ຄົ້ນ
ຄວ້າມັນ ແລະ ພົບວ່າເປັນສິ່ງເພິ່ງປາດຖະ
ໜາ; ແທ້ຈິງແລ້ວ, ແມ່ນ [ກ]ມີຄຸນຄ່າຫລາຍ
ຕໍ່ພວກເຮົາ ເຖິງຂະໜາດທີ່ພວກເຮົາ [ຂ]ຮັກ
ສາພຣະບັນຍັດຂອງພຣະຜູ້ເປັນເຈົ້າໄວ້
ເພື່ອລູກຫລານຂອງພວກເຮົາ.
22 ດັ່ງນັ້ນ ມັນຈຶ່ງເປັນຄວາມສະຫລຽວ
ສະຫລາດຂອງພຣະຜູ້ເປັນເຈົ້າ ທີ່ພວກ
ເຮົາຈະເອົາມັນໄປນຳ, ເວລາເດີນທາງໄປ
ໃນຖິ່ນແຫ້ງແລ້ງກັນດານ ໄປຫາແຜ່ນດິນ
ແຫ່ງຄຳສັນຍາ.

## ບົດທີ 6

*ນີໄຟບັນທຶກເລື່ອງລາວຂອງພຣະເຈົ້າ—ຈຸດປະສົງຂອງນີໄຟແມ່ນຢາກຊັກຊວນໃຫ້ມະນຸດເຂົ້າມາຫາພຣະເຈົ້າຂອງອັບຣາຮາມ ແລະ ໄດ້ຮັບຄວາມລອດ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້ານີໄຟຈະບໍ່ກ່າວ

---

14 ກ 1 ນຟ 3:3, 12.
ຄມພ ແຜ່ນຈາລຶກທອງເຫລືອງ.
ຂ 2 ນຟ 3:4;
ແອວ 10:3.
ຄມພ ໂຢເຊັບ, ລູກຊາຍຂອງຢາໂຄບ.
ຄ ຄມພ ຢາໂຄບ, ລູກຊາຍຂອງອີຊາກ.
ງ ປຖກ 37:29–36.
ຈ ປຖກ 45:4–5.
15 ກ ອພຍ 13:17–18;
ອມ 3:1–2;
1 ນຟ 17:23–31;
ຄພ 103:16–18; 136:22.
16 ກ 1 ນຟ 6:2.
19 ກ ແອວ 37:4–5.
21 ກ ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
ຂ 2 ນຟ 25:26.

ເຖິງລຳດັບການສືບເຊື້ອສາຍຂອງບັນພະ
ບຸລຸດຂອງບິດາຂອງຂ້າພະເຈົ້າໃນສ່ວນ
[ກ]ນີ້ຂອງບັນທຶກຂອງຂ້າພະເຈົ້າ; ທັງຂ້າພະ
ເຈົ້າຈະບໍ່ກ່າວໃນ [ຂ]ແຜ່ນຈາລຶກທີ່ຂ້າພະ
ເຈົ້າກຳລັງຂຽນຢູ່ໃນຕອນໃດເລີຍ; ເພາະ
ມັນໄດ້ກ່າວມາແລ້ວໃນບັນທຶກ ຊຶ່ງ [ຄ]ບິດາ
ຂອງຂ້າພະເຈົ້າຮັກສາໄວ້; ດັ່ງນັ້ນ, ຂ້າພະ
ເຈົ້າຈຶ່ງບໍ່ໄດ້ຂຽນມັນໄວ້ໃນບັນທຶກນີ້.
2 ເພາະເປັນການພຽງພໍສຳລັບຂ້າພະ
ເຈົ້າທີ່ຈະກ່າວວ່າ ພວກເຮົາເປັນຜູ້ສືບຕະ
ກຸນຂອງ [ກ]ໂຢເຊັບ.
3 ແລະ ບໍ່ສຳຄັນກັບຂ້າພະເຈົ້າທີ່ຈະ
ເຈາະຈົງໃຫ້ເລື່ອງລາວໂດຍຄົບຖ້ວນກ່ຽວ
ກັບທຸກເລື່ອງຂອງບິດາຂອງຂ້າພະເຈົ້າ,
ເພາະຂຽນໄວ້ບໍ່ໄດ້ໃນ [ກ]ແຜ່ນຈາລຶກເຫລົ່າ
ນີ້, ເພາະຂ້າພະເຈົ້າປາດຖະໜາຈະໃຫ້ມີ
ບ່ອນໄວ້ສຳລັບຂຽນເລື່ອງຂອງພຣະເຈົ້າ.
4 ເພາະຄວາມຕັ້ງໃຈອັນເຕັມປ່ຽມຂອງ
ຂ້າພະເຈົ້າກໍເພື່ອຈະ [ກ]ຊັກຊວນມະນຸດໃຫ້
ເຂົ້າ [ຂ]ມາຫາພຣະເຈົ້າຂອງອັບຣາຮາມ,
ແລະ ພຣະເຈົ້າຂອງອີຊາກ, ແລະ ພຣະ
ເຈົ້າຂອງຢາໂຄບ, ແລະ ຮັບຄວາມລອດ.
5 ດັ່ງນັ້ນ ຂ້າພະເຈົ້າຈຶ່ງບໍ່ຂຽນເລື່ອງອັນ
ເປັນທີ່ [ກ]ພໍໃຈຂອງໂລກ, ແຕ່ຂຽນເລື່ອງອັນ
ທີ່ພໍພຣະໄທຂອງພຣະເຈົ້າ ແລະ ພໍໃຈຄົນ
ຜູ້ບໍ່ໄດ້ເປັນຂອງໂລກ.
6 ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ໃຫ້ຄຳສັ່ງກັບ
ລູກຫລານຂອງຂ້າພະເຈົ້າ, ວ່າພວກເຂົາ
ຈະຕ້ອງບໍ່ໃຊ້ບ່ອນໃນແຜ່ນຈາລຶກເຫລົ່າ
ນີ້ໄປດ້ວຍເລື່ອງທີ່ບໍ່ມີຄຸນຄ່າສຳລັບລູກ
ຫລານມະນຸດ.

## ບົດທີ 7

*ພວກລູກຊາຍຂອງລີໄຮກັບຄືນໄປເຢຣູ ຊາເລັມ ແລະ ອິດຊະມາເອນກັບຄອບຄົວ ຕົກລົງໃຈມາຮ່ວມກັບພວກລີໄຮ—ເລມັນ ແລະ ການກະບົດຕ່າງໆ—ນີໄຟຊັກຊວນ ພວກອ້າຍຂອງລາວໃຫ້ມີສັດທາໃນພຣະຜູ້ ເປັນເຈົ້າ—ພວກເຂົາມັດລາວດ້ວຍເຊືອກ ແລະ ວາງແຜນການທີ່ຈະທຳລາຍລາວ— ລາວຖືກປ່ອຍເປັນອິດສະລະໂດຍອຳນາດ ແຫ່ງສັດທາ—ພວກອ້າຍຂອງລາວຮ້ອງຂໍ ເພື່ອການໃຫ້ອະໄພ—ລີໄຮກັບຜູ້ຄົນຂອງ ເພິ່ນຖວາຍເຄື່ອງບູຊາ ແລະ ເຄື່ອງເຜົາ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້າຢາກໃຫ້ທ່ານຮູ້,
ວ່າຫລັງຈາກລີໄຮບິດາຂອງຂ້າພະເຈົ້າໄດ້
[ກ]ທຳນາຍກ່ຽວກັບລູກຫລານຂອງເພິ່ນຈົບ
ແລ້ວ, ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້
ເປັນເຈົ້າໄດ້ກ່າວກັບເພິ່ນອີກ, ມີຄວາມວ່າ
ບໍ່ສົມຄວນທີ່ເຈົ້າລີໄຮຈະພາຄອບຄົວໄປ
ໃນຖິ່ນແຫ້ງແລ້ງກັນດານຕາມລຳພັງ, ແຕ່
ລູກຂອງເຈົ້າຄວນນຳເອົາ [ຂ]ຜູ້ຍິງມາເປັນ
[ຄ]ເມຍ, ເພື່ອຈະໄດ້ມີລູກຫລານລ້ຽງໄວ້ໃຫ້
ພຣະຜູ້ເປັນເຈົ້າໃນແຜ່ນດິນແຫ່ງຄຳສັນຍາ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າ [ກ]ບັນຊາເພິ່ນວ່າ ຂ້າພະເຈົ້າ
ນີໄຟ ແລະ ພວກອ້າຍຂອງຂ້າພະເຈົ້າຈະ
ຕ້ອງກັບໄປແຜ່ນດິນເຢຣູຊາເລັມອີກ ແລະ
ພາອິດຊະມາເອນກັບຄອບຄົວຂອງລາວ
ລົງມາໃນຖິ່ນແຫ້ງແລ້ງກັນດານ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ

**6** 1*ກ* 2 ນຟ 4:14–15.
*ຂ* 1 ນຟ 9:2.
*ຄ* 1 ນຟ 1:16–17; 19:1–6.
2*ກ* 1 ນຟ 5:14–16.
3*ກ* ຢຄ 7:27;
ຈຣ 1:2, 14;
ອມນ 1:30.
4*ກ* ຢຣ 20:30–31. ເບິ່ງ ໜ້າວິເຄາະສະບັບຂອງ ພຣະຄຳພີມໍມອນ.
*ຂ* 2 ນຟ 9:41, 45, 51.
5*ກ* 1 ທສນ 2:4;
ຄມ 1:4.
**7** 1*ກ* 1 ນຟ 5:17–19.
*ຂ* 1 ນຟ 16:7.
*ຄ* ຄມພ ແຕ່ງງານ, ການແຕ່ງງານ.
2*ກ* 1 ນຟ 16:7–8.

ພະເຈົ້ານີໄຟກັບພວກອ້າຍຂອງຂ້າພະເຈົ້າ
ໄດ້ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ [ກ]ອີກ
ເພື່ອຂຶ້ນໄປເຢຣູຊາເລັມ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ຂຶ້ນ ໄປເຖິງບ້ານ ຂອງ ອິດ ຊະ ມາ
ເອນ, ແລະ ພວກເຮົາໄດ້ເປັນທີ່ພໍໃຈໃນ
ສາຍຕາຂອງອິດຊະມາເອນ, ເຖິງຂະໜາດ
ທີ່ພວກເຮົາໄດ້ເວົ້າພຣະຄຳຂອງພຣະຜູ້
ເປັນເຈົ້າກັບລາວ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າໄດ້ເຮັດໃຫ້ໃຈຂອງອິດຊະມາ
ເອນອ່ອນລົງ, ພ້ອມທັງໃຈຂອງຄອບຄົວ
ຂອງລາວນຳອີກ ເຖິງຂະໜາດທີ່ພວກເຂົາ
ໄດ້ອອກເດີນທາງລົງມາກັບພວກເຮົາໃນ
ຖິ່ນແຫ້ງແລ້ງກັນດານ ມາຫາຜ້າເຕັ້ນຂອງ
ບິດາຂອງພວກເຮົາ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ກຳລັງເດີນທາງຢູ່ໃນຖິ່ນແຫ້ງແລ້ງ
ກັນດານຢູ່ນັ້ນ, ຈົ່ງເບິ່ງ, ເລມັນກັບເລມູ
ເອນ, ແລະ ລູກສາວສອງຄົນຂອງອິດຊະ
ມາເອນ, ແລະ [ກ]ລູກຊາຍສອງຄົນຂອງອິດ
ຊະມາເອນ ກັບຄອບຄົວຂອງພວກເຂົາໄດ້
ກະບົດຕໍ່ພວກເຮົາ; ແທ້ຈິງແລ້ວ, ໄດ້ຂັດ
ຂືນຂ້າພະເຈົ້ານີໄຟ ແລະ ແຊມ, ແລະ ອິດ
ຊະມາເອນ, ຜູ້ເປັນບິດາຂອງພວກເຂົາ,
ແລະ ຂັດຂືນເມຍຂອງລາວ, ແລະ ລູກສາວ
ອີກສາມຄົນຂອງລາວ.
7 ແລະ ເຫດການໄດ້ບັງເກີດຂຶ້ນໃນການ
ກະບົດຄັ້ງນັ້ນ, ພວກເຂົາປາດຖະໜາຈະ
ກັບໄປແຜ່ນດິນເຢຣູຊາເລັມ.
8 ແລະ ບັດນີ້ ຂ້າພະເຈົ້ານີໄຟ ໂດຍທີ່
[ກ]ໂສກເສົ້າເພາະຄວາມແຂງກະດ້າງຂອງ
ໃຈຂອງພວກເຂົາ, ສະນັ້ນ ຂ້າພະເຈົ້າຈຶ່ງໄດ້
ເວົ້າກັບພວກເຂົາ, ແທ້ຈິງແລ້ວ, ແມ່ນເວົ້າ
ກັບເລມັນກັບເລມູເອນວ່າ: ຈົ່ງເບິ່ງພວກ
ເຈົ້າ ຜູ້ຊຶ່ງເປັນອ້າຍຂອງເຮົາ, ເປັນຫຍັງ
ພວກເຈົ້າຈຶ່ງມີໃຈແຂງກະດ້າງແທ້, ແລະ
ພວກເຈົ້າບໍ່ຍອມເຂົ້າໃຈ, ຈົນຕ້ອງໃຫ້ເຮົາ
ຜູ້ເປັນນ້ອງເວົ້າກັບພວກເຈົ້າ, ແທ້ຈິງແລ້ວ,
ແລະ ເຮັດເປັນຕົວຢ່າງໃຫ້ພວກເຈົ້າອີກ?
9 ເປັນຫຍັງພວກເຈົ້າຈຶ່ງບໍ່ເຊື່ອຟັງພຣະ
ຄຳຂອງພຣະຜູ້ເປັນເຈົ້າ?
10 ເປັນຫຍັງພວກເຈົ້າຈຶ່ງ [ກ]ລືມວ່າ ພວກ
ເຈົ້າເຄີຍເຫັນທູດຂອງພຣະຜູ້ເປັນເຈົ້າ?
11 ແທ້ຈິງແລ້ວ, ແລະ ເປັນຫຍັງພວກ
ເຈົ້າຈຶ່ງລືມສິ່ງທີ່ຍິ່ງໃຫຍ່ທີ່ພຣະຜູ້ເປັນເຈົ້າ
ໄດ້ກະທຳເພື່ອພວກເຮົາ, ໃນການ [ກ]ປົດ
ປ່ອຍພວກເຮົາໃຫ້ພົ້ນຈາກກຳມືຂອງລາ
ບານ, ແລະ ພວກເຮົາໄດ້ຮັບບັນທຶກນັ້ນ
ອີກ?
12 ແທ້ຈິງແລ້ວ, ແລະ ເປັນຫຍັງພວກ
ເຈົ້າຈຶ່ງລືມວ່າ ພຣະຜູ້ເປັນເຈົ້າສາມາດເຮັດ
[ກ]ທຸກສິ່ງທຸກຢ່າງໄດ້ຕາມພຣະປະສົງຂອງ
ພຣະອົງ, ເພື່ອລູກຫລານມະນຸດ, ຖ້າຫາກ
ເປັນໄປວ່າ ເຂົາຈະໃຊ້ [ຂ]ສັດທາໃນພຣະ
ອົງ? ດັ່ງນັ້ນ, ຂໍໃຫ້ພວກເຮົາຊື່ສັດຕໍ່ພຣະ
ອົງ.
13 ແລະ ຖ້າຫາກເປັນໄປວ່າ ພວກເຮົາ
ຊື່ສັດຕໍ່ພຣະອົງແລ້ວ, ພວກເຮົາຈະໄດ້ຮັບ
[ກ]ແຜ່ນດິນແຫ່ງຄຳສັນຍາ; ແລະ ເວລາ
ໜຶ່ງໃນອະນາຄົດພວກເຈົ້າຈະຮູ້ວ່າ ພຣະ
ຄຳຂອງພຣະຜູ້ເປັນເຈົ້າກ່ຽວກັບ [ຂ]ຄວາມ

3 *ກ* 1 ນຟ 3:2–3.
6 *ກ* 2 ນຟ 4:10.
8 *ກ* ແອວ 31:2; ມຊ 7:41.
10 *ກ* ພບຍ 4:9; 1 ນຟ 3:29; 4:3.
11 *ກ* 1 ນຟ 4.
12 *ກ* 1 ນຟ 17:50; ແອວ 26:12.
*ຂ* 1 ນຟ 3:7; 15:11.
13 *ກ* 1 ນຟ 2:20. ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
*ຂ* 2 ກສ 25:1–21; 2 ນຟ 6:8; 25:10; ອມນ 1:15; ຮລມ 8:20–21.

ພິນາດຂອງເຢຣູຊາເລັມຈະຕ້ອງສຳເລັດ;
ເພາະທຸກເລື່ອງທີ່ພຣະຜູ້ເປັນເຈົ້າຮັບສັ່ງ
ກ່ຽວກັບຄວາມພິນາດຂອງເຢຣູຊາເລັມ
ຕ້ອງເປັນຈິງ.

14 ແລ້ວຈົ່ງເບິ່ງ ໃນບໍ່ຊ້າພຣະວິນຍານ
ຂອງພຣະຜູ້ເປັນເຈົ້າຈະເຊົາພະຍາຍາມ
ກັບພວກເຂົາ; ເພາະຈົ່ງເບິ່ງ, ພວກເຂົາ
[ກ]ບໍ່ຍອມຮັບສາດສະດາ ແລະ ເອົາ [ຂ]ເຢເຣ
ມີຢາເຂົ້າຄຸກ. ແລະ ພວກເຂົາພະຍາຍາມ
ເອົາ [ຄ]ຊີວິດບິດາຂອງເຮົາ ເຖິງຂະໜາດທີ່
ພວກເຂົາໄລ່ເພິ່ນອອກຈາກແຜ່ນດິນ.

15 ແລ້ວຈົ່ງເບິ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ຖ້າຫາກພວກເຈົ້າຈະກັບໄປເຢຣູ
ຊາເລັມພວກເຈົ້າຈະຕ້ອງຕາຍໄປກັບພວກ
ນັ້ນ. ແລະ ບັດນີ້, ຖ້າຫາກພວກເຈົ້າຈະ
ເລືອກຂຶ້ນໄປແຜ່ນດິນນັ້ນ, ຈົ່ງຈື່ຄຳເວົ້າທີ່
ເຮົາເວົ້າກັບພວກເຈົ້າ, ວ່າຖ້າຫາກພວກ
ເຈົ້າໄປ ພວກເຈົ້າຈະຕ້ອງຕາຍເໝືອນກັນ;
ຊຶ່ງພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້
ບັງຄັບເຮົາໃຫ້ເວົ້າດັ່ງນີ້.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຂ້າພະເຈົ້ານີໄຟໄດ້ເວົ້າຂໍ້ຄວາມເຫລົ່ານີ້
ກັບພວກເຂົາແລ້ວ, ພວກເຂົາກໍໃຈຮ້າຍໃຫ້
ຂ້າພະເຈົ້າ. ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ພວກເຂົາໄດ້ຈັບເອົາຂ້າພະເຈົ້າ, ເພາະ
ຈົ່ງເບິ່ງ, ພວກເຂົາຄຽດແຄ້ນຢ່າງຍິ່ງ, ແລະ
ພວກເຂົາໄດ້ [ກ]ມັດຂ້າພະເຈົ້າໄວ້ດ້ວຍ
ເຊືອກ ເພາະພວກເຂົາພະຍາຍາມທີ່ຈະ
ເອົາຊີວິດຂອງຂ້າພະເຈົ້າ, ເພື່ອຈະໄດ້ປະ
ຖິ້ມຂ້າພະເຈົ້າໄວ້ໃນຖິ່ນແຫ້ງແລ້ງກັນດານ
ໃຫ້ສັດປ່າກິນ.

17 ແຕ່ເຫດການໄດ້ບັງເກີດຂຶ້ນຄື ຂ້າພະ
ເຈົ້າໄດ້ອະທິຖານຫາພຣະຜູ້ເປັນເຈົ້າ ໂດຍ
ທູນວ່າ: ໂອ້ ພຣະຜູ້ເປັນເຈົ້າ, ຕາມສັດທາ
ຂອງຂ້ານ້ອຍທີ່ມີຢູ່ໃນພຣະອົງ, ຂໍພຣະອົງ
ຈົ່ງປົດປ່ອຍຂ້ານ້ອຍໃຫ້ພົ້ນຈາກກຳມືຂອງ
ພວກອ້າຍຂອງຂ້ານ້ອຍດ້ວຍເທີ້ນ; ແທ້
ຈິງແລ້ວ, ເຖິງແມ່ນປະທານກຳລັງໃຫ້ຂ້າ
ນ້ອຍເພື່ອຈະເຮັດໃຫ້ເຊືອກທີ່ຜູກຂ້ານ້ອຍ
[ກ]ຂາດອອກ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຂ້າພະເຈົ້າກ່າວຂໍ້ຄວາມນີ້ແລ້ວ, ຈົ່ງເບິ່ງ,
ເຊືອກມັດກໍຫລຸດອອກຈາກມື ແລະ ຕີນ
ຂອງຂ້າພະເຈົ້າ, ແລະ ຂ້າພະເຈົ້າຢືນຢູ່ຕໍ່
ໜ້າພວກອ້າຍຂອງຂ້າພະເຈົ້າ, ແລະ ຂ້າ
ພະເຈົ້າ ໄດ້ເວົ້າກັບພວກເຂົາອີກ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ໃຈຮ້າຍໃຫ້ຂ້າພະເຈົ້າອີກ
ແລະ ພະຍາຍາມຈະຈັບຂ້າພະເຈົ້າ; ແຕ່ຈົ່ງ
ເບິ່ງ, [ກ]ລູກສາວຄົນໜຶ່ງຂອງອິດຊະມາເອນ,
ແທ້ຈິງແລ້ວ, ແມ່ຂອງນາງນຳອີກ ແລະ ລູກ
ຊາຍຄົນໜຶ່ງຂອງອິດຊະມາເອນໄດ້ວິງ
ວອນພວກອ້າຍຂອງຂ້າພະເຈົ້າ, ເຖິງຂະ
ໜາດທີ່ພວກເຂົາໄດ້ເຮັດໃຫ້ໃຈຂອງພວກ
ເຂົາອ່ອນລົງ; ແລະ ພວກເຂົາກໍຢຸດພະຍາ
ຍາມທີ່ຈະເອົາຊີວິດຂອງຂ້າພະເຈົ້າ.

20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາເສົ້າສະຫລົດໃຈຫລາຍ, ເພາະ
ຄວາມຊົ່ວຮ້າຍຂອງພວກເຂົາ, ເຖິງຂະ
ໜາດທີ່ພວກເຂົາໄດ້ກົ້ມຂາບລົງຢູ່ຕໍ່ໜ້າຂ້າ
ພະເຈົ້າ, ແລະ ໄດ້ວິງວອນຂ້າພະເຈົ້າເພື່ອ
ຍົກໂທດໃຫ້ພວກເຂົາໃນສິ່ງທີ່ພວກເຂົາໄດ້
ກະທຳໄປກັບຂ້າພະເຈົ້າ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ [ກ]ຍົກໂທດໃຫ້ພວກເຂົາຢ່າງ
ເຕັມໃຈຕໍ່ທຸກຢ່າງທີ່ພວກເຂົາກະທຳໄປ,

---

14 *ກ* ອຊກ 5:6;
1 ນຟ 1:18–20; 2:13.
ຄມພ ກະບົດ, ການກະບົດ.
*ຂ* ຢມຢ 37:15–21.
*ຄ* 1 ນຟ 2:1.
16 *ກ* 1 ນຟ 18:11–15.
17 *ກ* ແອວ 14:26–28.
19 *ກ* 1 ນຟ 16:7.
21 *ກ* ຄມພ ອະໄພ, ໃຫ້ອະໄພ.

ແລະ ຂ້າພະເຈົ້າກໍໄດ້ຊັກຊວນໃຫ້ພວກເຂົາອະທິຖານຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ ເພື່ອຂໍການໃຫ້ອະໄພ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ກະທຳດັ່ງນັ້ນ. ແລະ ຫລັງຈາກພວກເຂົາໄດ້ອະທິຖານຫາພຣະຜູ້ເປັນເຈົ້າແລ້ວ, ພວກເຮົາໄດ້ອອກເດີນທາງອີກ ເພື່ອໄປຫາຜ້າເຕັ້ນຂອງບິດາຂອງພວກເຮົາ.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ລົງມາເຖິງຜ້າເຕັ້ນຂອງບິດາຂອງພວກເຮົາ. ແລະ ຫລັງຈາກຂ້າພະເຈົ້າກັບພວກອ້າຍ ແລະ ຄອບຄົວຂອງອິດຊະມາເອນທຸກຄົນລົງມາເຖິງຜ້າເຕັ້ນຂອງບິດາຂອງຂ້າພະເຈົ້າແລ້ວ, ເພິ່ນໄດ້ຖວາຍ [ກ]ຂອບພຣະຄຸນແດ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເພິ່ນ; ແລະ ພາກັນຖວາຍ [ຂ]ເຄື່ອງບູຊາ ແລະ ເຄື່ອງເຜົາແດ່ພຣະອົງ.

## ບົດທີ 8

*ລີໄຮເຫັນພາບນິມິດຂອງຕົ້ນໄມ້ແຫ່ງຊີວິດ—ເພິ່ນຮັບສ່ວນໝາກໄມ້ ແລະ ປາດຖະໜາໃຫ້ຄອບຄົວຂອງເພິ່ນໄດ້ຮັບສ່ວນເໝືອນກັນ—ເພິ່ນເຫັນຮາວເຫລັກ, ທາງຄັບ ແລະ ແຄບ, ແລະ ໝອກແຫ່ງຄວາມມືດປົກຄຸມຜູ້ຄົນ—ຊາໄຣຢາ, ນີໄຟ, ແລະ ແຊມໄດ້ຮັບສ່ວນໝາກໄມ້, ແຕ່ວ່າເລມັນກັບເລມູເອນປະຕິເສດບໍ່ຮັບ. ປະມານ 600–592 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ເຕົ້າໂຮມເມັດພືດຕ່າງໆ, ທັງເຂົ້າເປືອກທຸກຊະນິດ, ແລະ ແກ່ນໝາກໄມ້ທຸກຊະນິດເຂົ້າກັນ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນເວລາທີ່ບິດາຂອງຂ້າພະເຈົ້າຢູ່ໃນຖິ່ນແຫ້ງແລ້ງກັນດານນັ້ນ ເພິ່ນໄດ້ເວົ້າກັບພວກເຮົາວ່າ: ຈົ່ງເບິ່ງ, ພໍ່ໄດ້ [ກ]ຝັນເຫັນເລື່ອງໜຶ່ງ; ຫລື ອີກຄຳໜຶ່ງ, ພໍ່ໄດ້ເຫັນ [ຂ]ພາບນິມິດ.

3 ແລະ ຈົ່ງເບິ່ງ, ເພາະສິ່ງທີ່ພໍ່ເຫັນ, ພໍ່ຈຶ່ງມີເຫດຜົນທີ່ຈະປິຕິຍິນດີໃນພຣະຜູ້ເປັນເຈົ້າ ຍ້ອນ [ກ]ນີໄຟ ແລະ ແຊມນຳອີກ; ເພາະພໍ່ມີເຫດຜົນທີ່ຈະຄິດວ່າເຂົາ, ແລະ ລູກຫລານຂອງເຂົາຢ່າງຫລວງຫລາຍຈະລອດດ້ວຍກັນ.

4 ແຕ່ ຈົ່ງເບິ່ງ, ຍ້ອນພວກເຈົ້າ, [ກ]ເລມັນ ແລະ ເລມູເອນ, ພໍ່ຈຶ່ງຢ້ານກົວຢ່າງຍິ່ງ; ເພາະຈົ່ງເບິ່ງ, ພໍ່ຄິດວ່າພໍ່ເຫັນຄວາມມືດ, ແລະ ຄວາມເສົ້າໝອງຂອງຖິ່ນແຫ້ງແລ້ງກັນດານໃນຄວາມຝັນຂອງພໍ່.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່ໄດ້ເຫັນຊາຍຜູ້ໜຶ່ງໃສ່ [ກ]ເສື້ອຄຸມສີຂາວ, ແລະ ເພິ່ນໄດ້ມາຢືນຢູ່ຕໍ່ໜ້າພໍ່.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ເວົ້າກັບພໍ່, ແລະ ສັ່ງໃຫ້ພໍ່ຕິດຕາມເພິ່ນໄປ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຂະນະທີ່ພໍ່ຕິດຕາມເພິ່ນໄປ ພໍ່ໄດ້ເຫັນຕົວເອງຢູ່ໃນຄວາມມືດ ແລະ ຄວາມເສົ້າໝອງ.

8 ແລະ ຫລັງຈາກພໍ່ເດີນທາງເຂົ້າໄປໃນຄວາມມືດເປັນເວລາຫລາຍຊົ່ວໂມງ, ພໍ່ເລີ່ມອະທິຖານຫາພຣະຜູ້ເປັນເຈົ້າ ໃຫ້ມີ [ກ]ຄວາມເມດຕາຕໍ່ພໍ່, ຕາມພຣະກະລຸນາ ແລະ ຄວາມເມດຕາອັນລົ້ນເຫລືອຂອງພຣະອົງ.

---

22 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
*ຂ* 1 ນຟ 5:9.
**8** 2 *ກ* ຄມພ ເປີດເຜີຍ, ການເປີດເຜີຍ; ຝັນ.
*ຂ* 1 ນຟ 10:17. ຄມພ ພາບນິມິດ.
3 *ກ* 1 ນຟ 8:14–18.
4 *ກ* 1 ນຟ 8:35–36.
5 *ກ* ຈສ—ປ 1:30–32.
8 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກພໍ່ໄດ້ອະທິຖານຫາພຣະຜູ້ເປັນເຈົ້າ
ແລ້ວພໍ່ໄດ້ເຫັນ [ກ]ທົ່ງໃຫຍ່ ແລະກວ້າງແຫ່ງ
ໜຶ່ງ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່
ເຫັນ [ກ]ຕົ້ນໄມ້ທີ່ມີ [ຂ]ໝາກອັນເພິ່ງປາດຖະ
ໜາຈະເຮັດໃຫ້ຄົນເປັນສຸກ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່
ໄດ້ເຂົ້າໄປ ແລະ ຮັບສ່ວນ [ກ]ໝາກໄມ້ຈາກ
ຕົ້ນນັ້ນ; ແລະ ເຫັນວ່າໝາກໄມ້ນັ້ນຫວານ
ທີ່ສຸດເໜືອກວ່າທຸກຢ່າງທີ່ພໍ່ເຄີຍກິນມາ.
ແທ້ຈິງແລ້ວ, ພໍ່ເຫັນໝາກໄມ້ນັ້ນຂາວເກີນ
ກວ່າ [ຂ]ຄວາມຂາວທັງໝົດທີ່ພໍ່ເຄີຍເຫັນມາ.
12 ແລະ ເມື່ອພໍ່ໄດ້ຮັບສ່ວນໝາກໄມ້
ຈາກຕົ້ນນັ້ນແລ້ວ ຈິດວິນຍານຂອງພໍ່ເຕັມ
ໄປດ້ວຍ [ກ]ຄວາມຊື່ນຊົມຢ່າງໃຫຍ່ຫລວງ;
ດັ່ງນັ້ນ, ພໍ່ຈຶ່ງເລີ່ມ [ຂ]ປາດຖະໜາໃຫ້ຄອບ
ຄົວຂອງພໍ່ຮັບສ່ວນໝາກໄມ້ນັ້ນນຳກັນ;
ເພາະພໍ່ຮູ້ວ່າ ມັນເປັນໝາກໄມ້ທີ່ [ຄ]ເພິ່ງ
ປາດຖະໜາເໜືອກວ່າໝາກໄມ້ອື່ນໃດທັງ
ສິ້ນ.
13 ແລະ ເມື່ອພໍ່ກວາດສາຍຕາໄປອ້ອມ
ຮອບ, ບາງທີພໍ່ອາດຈະເຫັນຄອບຄົວຂອງ
ພໍ່ເໝືອນກັນ, ພໍ່ໄດ້ເຫັນ [ກ]ແມ່ນ້ຳສາຍໜຶ່ງ
ຊຶ່ງໄຫລໄປໃກ້ໆກັບຕົ້ນໄມ້ທີ່ພໍ່ກຳລັງກິນ
ໝາກມັນຢູ່.
14 ແລະ ພໍ່ໄດ້ຫລຽວໄປເພື່ອຢາກຮູ້ວ່າ
ແມ່ນ້ຳນັ້ນໄຫລມາຈາກໃສ; ແລະ ພໍ່ເຫັນ
ຕົ້ນແມ່ນ້ຳຢູ່ບໍ່ໄກເທົ່າໃດ ແລະ ບ່ອນຕົ້ນ
ແມ່ນ້ຳນັ້ນພໍ່ໄດ້ເຫັນຊາໄຣຢາແມ່ຂອງເຈົ້າ,
ແລະ ແຊມ, ແລະ ນີໄຟ; ແລະ ເຂົາເຈົ້າຢືນ
ງຽບຢູ່ບໍ່ຮູ້ວ່າ ເຂົາເຈົ້າຈະໄປທາງໃດ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່
ໄດ້ຮ້ອງຫາພວກເຂົາ; ແລະ ເອີ້ນພວກເຂົາ
ດ້ວຍສຽງດັງເພື່ອໃຫ້ພວກເຂົາມາຫາພໍ່,
ແລະ ຮັບສ່ວນໝາກໄມ້ ຊຶ່ງເປັນໝາກໄມ້ທີ່
ເພິ່ງປາດຖະໜາເໜືອກວ່າໝາກໄມ້ອື່ນໃດ
ທັງສິ້ນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ມາຫາພໍ່ ແລະ ຮັບສ່ວນໝາກ
ໄມ້ເໝືອນກັນ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່
ປາດຖະໜາຢາກໃຫ້ເລມັນກັບເລມູເອນ
ໄດ້ຮັບສ່ວນໝາກໄມ້ເໝືອນກັນ; ດັ່ງນັ້ນ, ພໍ່
ຈຶ່ງກວາດສາຍຕາມາທາງຕົ້ນແມ່ນ້ຳ, ບາງ
ທີອາດຈະເຫັນພວກເຂົາ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່
ໄດ້ເຫັນພວກເຂົາ, ແຕ່ພວກເຂົາ [ກ]ບໍ່ມາຫາ
ພໍ່ເພື່ອຮັບສ່ວນໝາກໄມ້ນັ້ນ.
19 ແລະ ພໍ່ເຫັນ [ກ]ຮາວເຫລັກຍາວຢຽດ
ຕາມແຄມແມ່ນ້ຳ, ແລະ ພາໄປເຖິງຕົ້ນໄມ້
ບ່ອນພໍ່ຢືນຢູ່.
20 ແລະ ພໍ່ໄດ້ເຫັນທາງ [ກ]ຄັບ ແລະ ແຄບ
ເປັນສາຍມາຕາມຮາວເຫລັກຈົນເຖິງຕົ້ນ
ໄມ້ທີ່ພໍ່ຢືນຢູ່ນັ້ນ; ແລະ ມັນພາມາໃກ້ກັບ
ຕົ້ນອ່າງນ້ຳໄປຫາ [ຂ]ທົ່ງໃຫຍ່ ແລະ ກວ້າງຄື
ກັນກັບວ່າເປັນໜ່ວຍໂລກໜ່ວຍໜຶ່ງ.
21 ແລະ ພໍ່ເຫັນຝູງຊົນຢ່າງຫລວງຫລາຍ

9 *ກ* ມທ 13:38.
10 *ກ* ປຖກ 2:9;
ພນມ 2:7; 22:2;
1 ນຟ 11:4, 8–25.
ຄນພ ຕົ້ນໄມ້ແຫ່ງຊີວິດ.
*ຂ* ແອວ 32:41–43.
11 *ກ* ແອວ 5:34.
*ຂ* 1 ນຟ 11:8.
12 *ກ* ຄນພ ຊື່ນຊົມ,
ຄວາມຊື່ນຊົມ.
*ຂ* ແອວ 36:24.
*ຄ* 1 ນຟ 15:36.
13 *ກ* 1 ນຟ 12:16–18;
15:26–29.
18 *ກ* 2 ນຟ 5:20–25.
19 *ກ* ພສສ 2:9;
ພນມ 12:5;
ປຈສ ພນມ 19:15 (ພາກ
ທ້ອຍທ້າຍ);
1 ນຟ 8:30; 11:25;
15:23–24.
20 *ກ* ມທ 7:14;
2 ນຟ 31:17–20.
*ຂ* ມທ 13:38.

ຈົນນັບບໍ່ຖ້ວນ, ຊຶ່ງຈຳນວນຫລວງຫລາຍຂອງພວກເຂົາກຳລັງມຸ້ງໜ້າ ເພື່ອຈະໄດ້ເຂົ້າໄປຫາ [ກ]ທາງທີ່ນຳມາຫາຕົ້ນໄມ້ທີ່ພໍ່ຢືນຢູ່.

22 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື ພວກເຂົາອອກມາ, ແລະ ເລີ່ມຕົ້ນເດີນຕາມທາງທີ່ພາມາຫາຕົ້ນໄມ້ນັ້ນ.

23 ແລະ ເຫດການ ໄດ້ບັງເກີດຂຶ້ນຄື [ກ]ໝອກແຫ່ງຄວາມມືດບັງເກີດຂຶ້ນ; ແທ້ຈິງແລ້ວ, ເຖິງກັບວ່າເປັນໝອກແຫ່ງຄວາມມືດຢ່າງໃຫຍ່ຫລວງ, ເຖິງຂະໜາດທີ່ພວກເຂົາ ຜູ້ຊຶ່ງເລີ່ມຕົ້ນໄປຕາມທາງໄດ້ຫລົງທາງ ຈົນບໍ່ຮູ້ຈະໄປທາງໃດ ແລະ ໄດ້ສູນຫາຍໄປ.

24 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່ໄດ້ເຫັນຄົນອື່ນໆມຸ້ງໜ້າມາຫາ, ແລະ ມາຈັບປາຍຮາວເຫລັກ, ແລະ ພວກເຂົາໄດ້ມຸ້ງໜ້າຜ່ານໝອກແຫ່ງຄວາມມືດໄປ, ກອດຮາວເຫລັກ, ຈົນວ່າໄດ້ມາຮັບສ່ວນ [ກ]ໝາກໄມ້ຈາກຕົ້ນໄມ້ນັ້ນ.

25 ຫລັງຈາກພວກເຂົາຮັບສ່ວນໝາກໄມ້ແລ້ວ ພວກເຂົາໄດ້ກວາດສາຍຕາໄປມາ ແລະ ຄືກັນກັບວ່າພວກເຂົາມີຄວາມ [ກ]ອັບອາຍ.

26 ແລະ ພໍ່ກວາດສາຍຕາໄປອ້ອມຮອບ, ແລະ ຈົ່ງເບິ່ງ, ຢູ່ຟາກແມ່ນ້ຳ, ມີອາຄານໃຫຍ່ ແລະ [ກ]ກວ້າງຂວາງຫລັງໜຶ່ງ; ແລະ ມັນຕັ້ງຢູ່ ຄືກັບວ່າ ມັນຢູ່ໃນອາກາດ, ສູງກວ່າແຜ່ນດິນໂລກ.

27 ແລະ ມັນເຕັມໄປດ້ວຍຄົນແກ່ ແລະ ຄົນໜຸ່ມ, ທັງຊາຍ ແລະ ຍິງ; ແລະ ການນຸ່ງຖືຂອງພວກເຂົາກໍຈົບງາມທີ່ສຸດ; ແລະ ພວກເຂົາຢູ່ໃນ [ກ]ທ່າທາງເຍາະເຍີ້ຍ ແລະ ຊີ້ນີ້ມາຫາຄົນຜູ້ທີ່ມາຮອດ ແລະ ກຳລັງຮັບສ່ວນໝາກໄມ້ນັ້ນຢູ່.

28 ແລະ ຫລັງຈາກພວກເຂົາ [ກ]ຊີມໝາກໄມ້ນັ້ນແລ້ວ ພວກເຂົາກໍມີຄວາມ [ຂ]ອັບອາຍ, ເພາະວ່າມີຜູ້ທີ່ກຳລັງເຍາະເຍີ້ຍພວກເຂົາຢູ່; ແລະ ພວກເຂົາກໍ [ຄ]ຕົກລົງໄປໃນທາງຕ້ອງຫ້າມ ແລະ ສູນຫາຍໄປ.

29 ແລະ ບັດນີ້ຂ້າພະເຈົ້ານີໄຟບໍ່ໄດ້ເວົ້າເຖິງຄຳເວົ້າຂອງບິດາຂອງຂ້າພະເຈົ້າ [ກ]ທັງໝົດ.

30 ແຕ່ເພື່ອໃຫ້ການຂຽນສັ້ນລົງ, ຈົ່ງເບິ່ງ, ເພິ່ນເຫັນຝູງຊົນອື່ນໆມຸ້ງໜ້າມາຫາ; ແລະ ຈັບປາຍ [ກ]ຮາວເຫລັກນັ້ນ; ແລະ ພວກເຂົາມຸ້ງໜ້າໄປຕາມທິດທາງຂອງພວກເຂົາໂດຍການຈັບຮາວເຫລັກໄວ້ໃຫ້ແໜ້ນຢູ່ຕະຫລອດເວລາ, ຈົນມາເຖິງແລ້ວລົ້ມລົງ ແລະ ຮັບສ່ວນໝາກໄມ້ຈາກຕົ້ນນັ້ນ.

31 ແລະ ເພິ່ນເຫັນ [ກ]ຝູງຊົນອື່ນໆກຳລັງງົມຫາເສັ້ນທາງໄປຫາອາຄານໃຫຍ່ ແລະ ກວ້າງຂວາງນັ້ນຢູ່.

32 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນຈຳນວນຫລວງຫລາຍຈົມຢູ່ໃນ [ກ]ອ່າງນ້ຳເລິກນັ້ນ; ແລະ ຈຳນວນຫລວງຫລາຍສູນຫາຍໄປຈາກສາຍຕາຂອງເພິ່ນ, ແລະ ເດີນແຊະໆຊ່ຳໆໄປຕາມທາງແປກປະຫລາດ.

33 ແລະ ຝູງຊົນຈຳນວນຫລວງຫລາຍໄດ້ເຂົ້າໄປໃນອາຄານແປກປະຫລາດຫລັງ

21 ກ ຄມພ ວິທີທາງ.
23 ກ 1 ນຟ 12:17; 15:24.
24 ກ 1 ນຟ 8:10–12.
25 ກ ຣມ 1:16; 2 ຕມທ 1:8; ແອວ 46:21; ມມ 8:38.
26 ກ 1 ນຟ 11:35–36; 12:18.
27 ກ ຄມພ ຈອງຫອງ, ຄວາມຈອງຫອງ.
28 ກ 2 ປຕ 2:19–22.
ຂ ມຣກ 4:14–20; 8:38; ລກ 8:11–15; ຢຮ 12:42–43.
ຄ ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
29 ກ 1 ນຟ 1:16–17.
30 ກ 1 ນຟ 15:23–24.
31 ກ ມທ 7:13.
32 ກ 1 ນຟ 15:26–29.

ນັ້ນ. ແລ້ວ ພວກ ເຂົາ ຊີ້ ມື ກເຍາະ ເຍີ້ຍ ຂ້າ
ພະ ເຈົ້າ ກັບ ຜູ້ ທີ່ ກຳ ລັງ ຮັບ ສ່ວນ ໝາກ ໄມ້
ນັ້ນຢູ່; ແຕ່ພວກເຮົາບໍ່ໄດ້ຫົວຊາພວກເຂົາ
ເລີຍ.

34 ນີ້ເປັນຄຳເວົ້າຂອງບິດາຂອງຂ້າພະ
ເຈົ້າ: ເພາະຫລາຍຕໍ່ຫລາຍຄົນທີ່ ກຫົວຊາ
ພວກນັ້ນກໍໄດ້ຕົກໄປແລ້ວ.

35 ແລະ ບິດາ ຂອງ ຂ້າພະເຈົ້າເວົ້າວ່າ
ກເລມັນກັບ ເລ ມູ ເອນບໍ່ໄດ້ຮັບສ່ວນໝາກ
ໄມ້ນັ້ນ.

36 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຫລັງ ຈາກບິດາຂອງຂ້າພະ ເຈົ້າໄດ້ເລົ່າ ຂໍ້
ຄວາມ ທັງໝົດ ຊຶ່ງມີຢູ່ຢ່າງຫລວງ ຫລາຍ
ກ່ຽວກັບຄວາມຝັນ ແລະ ພາບນິມິດຂອງ
ເພິ່ນ ແລ້ວ, ເພິ່ນ ໄດ້ ເວົ້າກັບພວກເຮົາວ່າ
ເພາະສິ່ງທີ່ເພິ່ນໄດ້ເຫັນໃນພາບນີ້, ເພິ່ນຈຶ່ງ
ມີຄວາມຢ້ານກົວຢ່າງຍິ່ງແທນເລມັນກັບເລ
ມູເອນ; ແທ້ຈິງແລ້ວ, ເພິ່ນຢ້ານກົວວ່າພວກ
ເຂົາຈະຖືກປະຖິ້ມຈາກທີ່ປະທັບຂອງພຣະ
ຜູ້ເປັນເຈົ້າ.

37 ແລະ ເພິ່ນໄດ້ແນະນຳພວກເຂົາດ້ວຍ
ຄວາມ ຮູ້ສຶກ ທັງໝົດຂອງ ກບິດາທີ່ປານີຕໍ່
ລູກເພື່ອພວກເຂົາຈະເຊື່ອຟັງຄຳຂອງເພິ່ນ,
ເພື່ອພຣະຜູ້ເປັນເຈົ້າອາດຈະເມດຕາ ແລະ
ບໍ່ປະຖິ້ມພວກເຂົາ; ແທ້ຈິງແລ້ວ, ບິດາຂອງ
ຂ້າພະເຈົ້າໄດ້ສັ່ງສອນພວກເຂົາ.

38 ແລະ ຫລັງ ຈາກ ເພິ່ນສັ່ງສອນພວກ
ເຂົາແລ້ວ, ເພິ່ນຍັງໄດ້ທຳນາຍຫລາຍເລື່ອງ
ກ່ຽວກັບພວກເຂົາອີກ, ເພິ່ນຂໍຮ້ອງໃຫ້ພວກ
ເຂົາຮັກສາພຣະບັນຍັດຂອງພຣະຜູ້ເປັນ
ເຈົ້າ; ແລະ ເພິ່ນໄດ້ຢຸດເວົ້າກັບພວກເຂົາ.

## ບົດທີ 9

*ນີໄຟ ເຮັດ ບັນ ທຶກສອງຊຸດ—ແຕ່ລະຊຸດ ເອີ້ນ ວ່າ ແຜ່ນ ຈາລຶກ ຂອງ ນີໄຟ—ແຜ່ນ ຈາລຶກ ໃຫຍ່ປະກອບດ້ວຍປະຫວັດສາດ ຂອງການປົກຄອງແຜ່ນດິນ; ແຜ່ນຈາລຶກ ນ້ອຍສ່ວນ ໃຫຍ່ແມ່ນກ່ຽວກັບສິ່ງສັກສິດ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເລື່ອງທັງໝົດນີ້ບິດາຂອງຂ້າພະ
ເຈົ້າໄດ້ເຫັນ ແລະ ໄດ້ຍິນ ແລະ ໄດ້ເວົ້າ
ເວລາທີ່ເພິ່ນຢູ່ໃນຜ້າເຕັ້ນໃນ ກຮ່ອມພູເລມູ
ເອນ, ແລະ ມີອີກຫລາຍເລື່ອງທີ່ຂຽນໄວ້ບໍ່
ໄດ້ ໃນແຜ່ນຈາລຶກນີ້.

2 ແລະ ບັດນີ້, ດັ່ງທີ່ຂ້າພະເຈົ້າໄດ້ເວົ້າ
ກ່ຽວກັບ ແຜ່ນ ຈາລຶກເຫລົ່ານີ້, ຈົ່ງເບິ່ງ ບໍ່
ແມ່ນຢູ່ໃນແຜ່ນຈາລຶກນີ້ທີ່ຂ້າພະເຈົ້າເຮັດ
ເລື່ອງລາວຂອງຜູ້ຄົນຂອງຂ້າພະເຈົ້າໂດຍ
ຄົບຖ້ວນ; ເພາະ ກແຜ່ນຈາລຶກທີ່ຂ້າພະເຈົ້າ
ເຮັດເລື່ອງລາວຂອງຜູ້ຄົນຂອງຂ້າພະເຈົ້າ
ໂດຍຄົບຖ້ວນນັ້ນຂ້າພະເຈົ້າຕັ້ງຊື່ໃຫ້ວ່າ
ນີໄຟ; ດັ່ງນັ້ນ, ມັນຈຶ່ງມີຊື່ວ່າແຜ່ນຈາລຶກ
ຂອງນີໄຟຕາມຊື່ຂອງຂ້າພະເຈົ້າເອງ,
ແລະ ແຜ່ນຈາລຶກເຫລົ່ານີ້ຈຶ່ງໄດ້ຖືກເອີ້ນ
ວ່າ ແຜ່ນຈາລຶກຂອງນີໄຟເໝືອນກັນ.

3 ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າໄດ້ຮັບ
ພຣະບັນຍັດຈາກພຣະຜູ້ເປັນເຈົ້າວ່າ ຂ້າ
ພະເຈົ້າຄວນຈະເຮັດແຜ່ນຈາລຶກເຫລົ່າ
ນີ້, ດ້ວຍ ກຈຸດປະສົງພິເສດທີ່ຄວນບັນທຶກ
ເລື່ອງລາວຕ່າງໆກ່ຽວກັບ ຂການປະຕິບັດ
ສາດສະໜາກິດຂອງຜູ້ຄົນຂອງຂ້າພະເຈົ້າ.

4 ໃນແຜ່ນຈາລຶກອີກຊຸດໜຶ່ງຈະບັນທຶກ

---

33 *ກ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
34 *ກ* ອພຍ 23:2.
35 *ກ* 1 ນຟ 8:17–18; 2 ນຟ 5:19–24.
37 *ກ* ຄມພ ຄອບຄົວ; ພໍ່ແມ່, ບິດາມານດາ.
**9** 1 *ກ* 1 ນຟ 2:4–6, 8, 14–15; 16:6.
2 *ກ* 1 ນຟ 19:2, 4; ຢຄ 3:13–14; ຄມ 1:2–11; ຄພ 10:38–40. ຄມພ ແຜ່ນຈາລຶກ.
3 *ກ* ຄພ 3:19.
*ຂ* 1 ນຟ 6:3.

ເລື່ອງ ລາວ ຕ່າງໆ ກ່ຽວ ກັບ ການ ປົກ ຄອງ
ຂອງກະສັດ, ແລະ ສົງຄາມ ແລະ ການ
ຂັດ ແຍ້ງ ຂອງ ຜູ້ ຄົນ ຂອງ ຂ້າພະ ເຈົ້າ; ດັ່ງ
ນັ້ນ ແຜ່ນຈາລຶກເຫລົ່ານີ້ຈຶ່ງບັນທຶກກ່ຽວກັບ
ການປະຕິບັດສາດສະໜາກິດເປັນສ່ວນ
ໃຫຍ່ ຊຶ່ງ [ກ]ແຜ່ນຈາລຶກອີກຊຸດໜຶ່ງບັນທຶກ
ກ່ຽວກັບການປົກຄອງຂອງກະສັດ ແລະ
ສົງຄາມ ແລະ ການຂັດແຍ້ງຂອງຜູ້ຄົນຂອງ
ຂ້າພະເຈົ້າເປັນສ່ວນໃຫຍ່.
5 ດັ່ງນັ້ນ, ພຣະຜູ້ເປັນເຈົ້າໄດ້ບັນຊາຂ້າ
ພະເຈົ້າໃຫ້ເຮັດແຜ່ນຈາລຶກເຫລົ່ານີ້ໄວ້
ດ້ວຍຈຸດປະສົງ [ກ]ອັນສະຫລາດໃນພຣະ
ອົງ, ຊຶ່ງຂ້າພະເຈົ້າບໍ່ຮູ້ຫຍັງເລີຍກ່ຽວກັບ
ຈຸດປະສົງນີ້.
6 ແຕ່ ພຣະຜູ້ເປັນເຈົ້າ [ກ]ຮູ້ເລື່ອງທັງໝົດ
ຕັ້ງແຕ່ຕົ້ນມາ; ດັ່ງນັ້ນ, ພຣະອົງຈຶ່ງຕຽມ
ທາງໄວ້ເພື່ອວຽກງານຂອງພຣະອົງຈະສຳ
ເລັດໃນບັນດາລູກຫລານມະນຸດ; ເພາະ
ຈົ່ງເບິ່ງ, ພຣະອົງມີ [ຂ]ອຳນາດທຸກຢ່າງເພື່ອ
ໃຫ້ຄຳຂອງພຣະອົງທັງໝົດສຳເລັດ. ແລະ
ເປັນໄປດັ່ງນັ້ນ. ອາແມນ.

## ບົດທີ 10

*ລີໄຮທຳນາຍວ່າຊາວຢິວຈະຖືກພາໄປເປັນຊະເລີຍຂອງຊາວບາບີໂລນ—ເພິ່ນບອກເຖິງການສະເດັດມາຂອງພຣະເມຊີອາຂອງຊາວຢິວ, ພຣະຜູ້ຊ່ວຍໃຫ້ລອດ, ພຣະຜູ້ໄຖ່—ລີໄຮບອກເຖິງການມາຂອງຄົນຜູ້ໜຶ່ງທີ່ຈະໃຫ້ບັບຕິສະມາແກ່ພຣະເມສານ້ອຍຂອງພຣະເຈົ້າ—ລີໄຮບອກເຖິງການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຂອງພຣະເມຊີອາ—ເພິ່ນປຽບທຽບການກະຈັດກະຈາຍ ແລະ ການເຕົ້າໂຮມຂອງຊາວອິດສະຣາເອນກັບຕົ້ນໝາກກອກເທດ—ນີໄຟເວົ້າເຖິງພຣະບຸດຂອງພຣະເຈົ້າ, ຂອງປະທານແຫ່ງພຣະວິນຍານບໍລິສຸດ, ແລະ ຄວາມຕ້ອງການສຳລັບຄວາມຊອບທຳ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້ານີໄຟຈະໃຫ້
ເລື່ອງລາວໄວ້ໃນ [ກ]ແຜ່ນຈາລຶກເຫລົ່ານີ້
ກ່ຽວກັບການປະຕິບັດສາດສະໜາກິດ
ແລະ ການປົກຄອງຂອງຂ້າພະເຈົ້າ; ດັ່ງ
ນັ້ນ, ເພື່ອຈະໃຫ້ເປັນໄປຕາມເລື່ອງລາວ
ຂອງຂ້າພະເຈົ້າ, ຂ້າພະເຈົ້າຈຶ່ງຈະເວົ້າເຖິງ
ເລື່ອງບິດາ, ແລະ ພວກອ້າຍຂອງຂ້າພະ
ເຈົ້ານຳອີກ.
2 ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກບິດາຂອງຂ້າພະເຈົ້າໄດ້ເລົ່າ
ເລື່ອງກ່ຽວກັບ [ກ]ຄວາມຝັນ ຂອງເພິ່ນຈົບ
ລົງແລ້ວ, ແລະ ໄດ້ຊັກຊວນພວກເຂົາທັງ
ໝົດໃຫ້ມີຄວາມພາກພຽນ, ແລະ ເພິ່ນກໍໄດ້
ເວົ້າກ່ຽວກັບຊາວຢິວນຳອີກ—
3 ວ່າ ຫລັງ ຈາກພວກເຂົາຖືກທຳລາຍ
ພ້ອມທັງມະຫານະຄອນ [ກ]ເຢຣູຊາເລັມ
ແລ້ວ, ຄົນຈຳນວນຫລວງຫລາຍຈະຖືກ
[ຂ]ຈັບໄປເປັນຊະເລີຍໃນ [ຄ]ບາບີໂລນຕາມ

4 *ກ* ຢຄ 1:2–4;
ຄມ 1:10.
5 *ກ* 1 ນຟ 19:3;
ຄມ 1:7;
ແອວ 37:2, 12, 14.
6 *ກ* 2 ນຟ 9:20;
ຄພ 38:2;
ມຊ 1:6, 35.
ຄມພ ຮອບຮູ້ທຸກຢ່າງ.
*ຂ* ມທ 28:18.
**10** 1 *ກ* 1 ນຟ 9:1–5; 19:1–6;
ຢຄ 1:1–4.
2 *ກ* 1 ນຟ 8.
3 *ກ* ອສທ 2:6;
2 ນຟ 6:8;
ຣລມ 8:20–21.
*ຂ* 587 ປີ ກ່ອນ ຄ.ສ.; ເບິ່ງ
ລຳດັບປະຫວັດສາດ ໃນ
ພາກທ້ອຍທ້າຍ.
2 ນຟ 25:10.
*ຄ* ອຊກ 24:2;
1 ນຟ 1:13;
ອມນ 1:15.

ເວລາອັນເໝາະສົມຂອງພຣະຜູ້ເປັນເຈົ້າ,
ພວກເຂົາຈະໄດ້ [ງ]ກັບຕ່າວ ຄືນອີກ, ແທ້
ຈິງແລ້ວ, ແມ່ນພວກເຂົາຈະຖືກນຳກັບມາ
ຈາກການເປັນຊະເລີຍ; ແລະ ຫລັງຈາກໄດ້
ຖືກນຳກັບມາຈາກການເປັນຊະເລີຍແລ້ວ
ພວກເຂົາຈຶ່ງຈະໄດ້ເປັນເຈົ້າຂອງແຜ່ນດິນ
ຊຶ່ງເປັນມູນມໍລະດົກຂອງພວກເຂົາ.
4 ແທ້ຈິງແລ້ວ, ແມ່ນເປັນ [ກ]ຫົກຮ້ອຍປີນັບ
ຕັ້ງແຕ່ເວລາບິດາຂອງຂ້າພະເຈົ້າອອກຈາກ
ເຢຣູຊາເລັມມາ, ອົງພຣະຜູ້ເປັນເຈົ້າຈະລ້ຽງ
ຄົນຜູ້ໜຶ່ງໃຫ້ເປັນ [ຂ]ສາດສະດາໃນບັນດາ
ຊາວຢິວ—ຄື [ຄ]ພຣະເມຊີອາ ຫລື ອີກຄຳໜຶ່ງ
ເອີ້ນວ່າ ພຣະຜູ້ຊ່ວຍໃຫ້ລອດຂອງໂລກ.
5 ແລະ ເພິ່ນໄດ້ໃຫ້ຖ້ອຍຄຳກ່ຽວກັບ
ສາດສະດາທັງຫລາຍນຳອີກວ່າ ມີຄົນ
ຈຳນວນຫລວງຫລາຍທີ່ໄດ້ [ກ]ສະແດງໃຫ້
ເຫັນຫລາຍເລື່ອງກ່ຽວກັບພຣະເມຊີອາອົງ
ນີ້, ຫລື ພຣະຜູ້ໄຖ່ຂອງໂລກອົງນີ້.
6 ດັ່ງນັ້ນ, ມະນຸດຊາດທັງປວງ ຊຶ່ງຢູ່ໃນ
ສະພາບຫາຍຍະນະຢູ່ໃນສະພາບ [ກ]ຕົກຕ່ຳ
ແລະ ຈະບໍ່ພົ້ນເລີຍ ນອກຈາກພວກເຂົາຈະ
ວາງໃຈໃນພຣະຜູ້ໄຖ່ອົງນີ້.
7 ແລະ ເພິ່ນໄດ້ເວົ້າກ່ຽວກັບ [ກ]ສາດສະ
ດາຜູ້ໜຶ່ງອີກ ຜູ້ທີ່ຈະມາກ່ອນພຣະເມຊີອາ,
ເພື່ອຕຽມທາງຂອງພຣະຜູ້ເປັນເຈົ້າ—
8 ແທ້ຈິງແລ້ວ, ແມ່ນເພິ່ນຈະອອກໄປ
ແລະ ຮ້ອງປະກາດຢູ່ໃນຖິ່ນແຫ້ງແລ້ງກັນ
ດານວ່າ: ຈົ່ງ [ກ]ຕຽມທາງຂອງພຣະຜູ້ເປັນ
ເຈົ້າເຖີດ ແລະ ເຮັດໃຫ້ທາງຂອງພຣະອົງ
ຊື່ຕົງ; ເພາະຈະມີຜູ້ໜຶ່ງທີ່ທ່ານບໍ່ຮູ້ຈັກ ຈະ
ມາຢືນຢູ່ໃນບັນດາພວກທ່ານ ແລະ ເພິ່ນ
ຜູ້ນີ້ຍິ່ງໃຫຍ່ກວ່າຂ້າພະເຈົ້າ, ຜູ້ທີ່ເຖິງແມ່ນ
ແຕ່ສາຍເກີບຂອງເພິ່ນ ຂ້າພະເຈົ້າກໍບໍ່ສົມ
ຄວນຈະແກ້ໃຫ້. ແລະ ບິດາຂອງຂ້າພະ
ເຈົ້າເວົ້າຢ່າງຍືດຍາວກ່ຽວກັບເລື່ອງນີ້.
9 ແລະ ບິດາຂອງຂ້າພະເຈົ້າກ່າວອີກວ່າ
ເພິ່ນຈະໃຫ້ບັບຕິສະມາໃນ [ກ]ເບັດທາບາຣາ
ເລີຍຈາກແມ່ນ້ຳຈໍແດນໄປ; ແລະ ເພິ່ນຍັງ
ກ່າວອີກວ່າ ເພິ່ນຈະໃຫ້ [ຂ]ບັບຕິສະມາດ້ວຍ
ນ້ຳ; ແລະ ເພິ່ນຈະໃຫ້ບັບຕິສະມາພຣະເມ
ຊີອາດ້ວຍນ້ຳຄືກັນ.
10 ແລະ ຫລັງຈາກເພິ່ນໃຫ້ບັບຕິສະມາ
ແກ່ພຣະເມຊີອາດ້ວຍນ້ຳແລ້ວ, ເພິ່ນຈະ
ເຫັນ ແລະ ເປັນພະຍານວ່າ, ເພິ່ນໄດ້ໃຫ້
ບັບຕິສະມາແກ່ [ກ]ພຣະເມສານ້ອຍຂອງ
ພຣະເຈົ້າ, ຜູ້ທີ່ຈະຍົກເອົາບາບຂອງໂລກ
ໄປ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກບິດາຂອງຂ້າພະເຈົ້າເວົ້າຂໍ້
ຄວາມຈົບແລ້ວ, ເພິ່ນໄດ້ເວົ້າກັບພວກອ້າຍ
ຂອງຂ້າພະເຈົ້າກ່ຽວກັບພຣະກິດຕິຄຸນ ຊຶ່ງ
ຈະໃຊ້ສັ່ງສອນໃນບັນດາຊາວຢິວ, ແລະ
ກ່ຽວກັບ [ກ]ການເສື່ອມໂຊມດ້ວຍ [ຂ]ຄວາມ
ບໍ່ເຊື່ອຖືຂອງຊາວຢິວນຳອີກ. ແລະ ຫລັງ
ຈາກພວກເຂົາ [ຄ]ປະຫານພຣະເມຊີອາຜູ້ທີ່
ຈະສະເດັດມາ, ຫລັງຈາກທີ່ພຣະອົງຖືກປະ
ຫານຊີວິດແລ້ວ, ພຣະອົງຈະ [ງ]ລຸກຂຶ້ນຈາກ
ຄວາມຕາຍ ແລະ ຈະສະແດງພຣະອົງເອງ

---

3 *ງ* ຢມຢ 29:10; 2 ນຟ 6:8–9.
4 *ກ* 1 ນຟ 19:8; 2 ນຟ 25:19; 3 ນຟ 1:1.
*ຂ* 1 ນຟ 22:20–21.
*ຄ* ຄມພ ພຣະເມຊີອາ.
5 *ກ* ຢຄ 7:11; ມຊຢ 13:33; ຣລມ 8:19–24; 3 ນຟ 20:23–24.
6 *ກ* ຄມພ ການຕົກຂອງອາດາມ ແລະ ເອວາ.
7 *ກ* 1 ນຟ 11:27; 2 ນຟ 31:4.
8 *ກ* ອຊຢ 40:3; ມທ 3:1–3.
9 *ກ* ຢຮ 1:28.
*ຂ* ຄມພ ໂຢຮັນບັບຕິສະໂຕ.
10 *ກ* ຄມພ ພຣະເມສານ້ອຍຂອງພຣະເຈົ້າ.
11 *ກ* ຢຄ 4:14–18.
*ຂ* ມມ 5:14.
*ຄ* ຄມພ ຄຶງ, ການຄຶງ; ພຣະເຢຊູຄຣິດ.
*ງ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.

ໃຫ້ປະຈັກແກ່ຄົນຕ່າງຊາດ ໂດຍ [ຈ]ພຣະວິນ
ຍານບໍລິສຸດ.

12 ແທ້ ຈິງ ແລ້ວ, ບິດາ ຂອງ ຂ້າ ພະ ເຈົ້າ
ໄດ້ເວົ້າຢ່າງຍືດຍາວກ່ຽວກັບຄົນຕ່າງຊາດ,
ແລະ ກ່ຽວກັບເຊື້ອສາຍອິດສະຣາເອນອີກ
ວ່າພວກເຂົາປຽບ ເໝືອນ [ກ]ຕົ້ນໝາກກອກ
ເທດທີ່ກິ່ງງ່າຈະຫັກ ແລະ [ຂ]ກະຈັດກະຈາຍ
ໄປທົ່ວພື້ນແຜ່ນດິນໂລກ.

13 ດັ່ງນັ້ນ, ເພິ່ນກ່າວວ່າມັນຈຳເປັນຈະ
ຕ້ອງເປັນໄປວ່າ ພວກເຮົາຈະຖືກນຳໄປຫາ
[ກ]ແຜ່ນດິນ ແຫ່ງຄຳສັນຍາພ້ອມກັນ, ເພື່ອ
ຈະເຮັດໃຫ້ພຣະຄຳຂອງພຣະຜູ້ເປັນເຈົ້າ
ສຳເລັດ, ຄືພວກເຮົາຈະກະຈັດກະຈາຍໄປ
ທົ່ວພື້ນແຜ່ນດິນໂລກ.

14 ແລະ ຫລັງຈາກທີ່ເຊື້ອສາຍອິດສະ
ຣາເອນກະຈັດກະຈາຍໄປ, ພວກເຂົາຈະ
ມາ [ກ]ເຕົ້າໂຮມກັນອີກ; ຫລື, ໂດຍສະຫລຸບ,
ຫລັງຈາກທີ່ [ຂ]ຄົນຕ່າງຊາດໄດ້ຮັບຄວາມ
ສົມບູນຂອງພຣະກິດຕິຄຸນແລ້ວ, ກິ່ງງ່າ
ເດີມຂອງ [ຄ]ຕົ້ນໝາກກອກເທດ, ຫລື ເຊື້ອ
ສາຍອິດສະຣາເອນທີ່ເຫລືອຢູ່ນັ້ນຈະຖືກຕໍ່
ເຂົ້າກັນຄືນ, ຫລື ມີຄວາມຮູ້ເຖິງພຣະເມຊີ
ອາທີ່ແທ້ຈິງ ພຣະຜູ້ເປັນເຈົ້າຂອງພວກເຂົາ
ແລະ ພຣະຜູ້ໄຖ່ຂອງພວກເຂົາ.

15 ແລະ ຕາມ ພາ ສາ ນີ້ ບິດາຂອງຂ້າ
ພະເຈົ້າໄດ້ທຳນາຍ ແລະ ເວົ້າຕໍ່ພວກອ້າຍ
ຂອງຂ້າພະເຈົ້າ, ແລະ ອີກຫລາຍເລື່ອງ ຊຶ່ງ
ຂ້າພະເຈົ້າບໍ່ໄດ້ຂຽນໄວ້ໃນໜັງສືເຫລັ້ມນີ້;
ເພາະຂ້າພະເຈົ້າຂຽນຫລາຍເລື່ອງທີ່ສົມ
ຄວນສຳລັບຂ້າພະເຈົ້າໄວ້ໃນ [ກ]ໜັງສືອີກ
ເຫລັ້ມໜຶ່ງຂອງຂ້າພະເຈົ້າເອງ.

16 ແລະ ເລື່ອງທັງໝົດທີ່ຂ້າພະເຈົ້າເວົ້າ
ເຖິງເປັນໄປໃນເວລາທີ່ບິດາຂອງຂ້າພະ
ເຈົ້າອາໄສຢູ່ໃນຜ້າເຕັ້ນໃນຮ່ອມພູເລມູ
ເອນ.

17 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຫລັງຈາກຂ້າພະເຈົ້ານີໄຟໄດ້ຍິນ [ກ]ຄຳເວົ້າ
ທັງໝົດຂອງບິດາຂອງຂ້າພະເຈົ້າກ່ຽວກັບ
ເລື່ອງທີ່ເພິ່ນເຫັນໃນ [ຂ]ພາບນິມິດ, ແລະ
ເລື່ອງທີ່ເພິ່ນໄດ້ເວົ້າໂດຍອຳນາດຂອງ
ພຣະວິນຍານບໍລິສຸດ, ຊຶ່ງເປັນອຳນາດທີ່
ເພິ່ນໄດ້ຮັບມາໂດຍມີສັດທາໃນພຣະບຸດ
ຂອງພຣະເຈົ້າ—ແລະ ພຣະບຸດຂອງພຣະ
ເຈົ້າຄື [ຄ]ພຣະເມຊີອາຜູ້ທີ່ຈະສະເດັດມາ—
ຂ້າພະເຈົ້ານີໄຟມີຄວາມປາດຖະໜາຄື
ກັນວ່າຈະໄດ້ເຫັນ, ແລະ ຈະໄດ້ຍິນ, ແລະ
ຈະໄດ້ຮູ້ເຖິງເລື່ອງເຫລົ່ານີ້, ໂດຍອຳນາດ
ຂອງ [ງ]ພຣະວິນຍານບໍລິສຸດ ຊຶ່ງເປັນຂອງ
ປະທານຂອງພຣະເຈົ້າທີ່ໃຫ້ຄົນທັງຫລາຍ
ຜູ້ທີ່ສະແຫວງຫາພຣະອົງ [ຈ]ຢ່າງພາກພຽນ
ໃນສະໄໝ [ສ]ກ່ອນຄືກັນກັບສະໄໝທີ່ພຣະ
ອົງສະແດງພຣະອົງເອງໃຫ້ປະຈັກແກ່ລູກ
ຫລານມະນຸດ.

18 ເພາະພຣະອົງເປັນ [ກ]ເໝືອນກັນ ເຊັ່ນ

11 ຈ ຄມພ ພຣະວິນຍານບໍລິສຸດ.
12 ກ ປຖກ 49:22–26; 1 ນຟ 15:12; 2 ນຟ 3:4–5; ຢຄ 5; 6:1–7. ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ; ໝາກກອກເທດ, ຕົ້ນ.
ຂ 1 ນຟ 22:3–8. ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ.
13 ກ 1 ນຟ 2:20. ຄມພ ແຜ່ນດິນແຫ່ງຄຳສັນຍາ.
14 ກ ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
ຂ 1 ນຟ 13:42; ຄພ 14:10.
ຄ ຢຄ 5:8, 52, 54, 60, 68.
15 ກ 1 ນຟ 1:16–17.
17 ກ ອນ 1:3; ແອວ 36:17.
ຂ 1 ນຟ 8:2.
ຄ ຄມພ ພຣະເມຊີອາ.
ງ ຄມພ ພຣະວິນຍານບໍລິສຸດ.
ຈ ມຣນ 10:4–5, 7, 19.
ສ ຄພ 20:26.
18 ກ ຮຣ 13:8; ມມ 9:9; ຄພ 20:12. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.

ມື້ວານນີ້, ມື້ນີ້, ແລະ ຕະຫລອດການ; ແລະ
ທາງມີຕຽມໄວ້ສຳລັບມະນຸດທັງປວງຕັ້ງແຕ່
ການ ວາງ ຮາກ ຖານ ຂອງ ໂລກ, ຖ້າ ຫາກ
ເປັນໄປວ່າ ພວກເຂົາຈະກັບໃຈ ແລະ ມາ
ຫາພຣະອົງ.
19 ເພາະ ຜູ້ ທີ່ ສະແຫວງ ຫາ ຢ່າງ ພາກ
ພຽນຈະໄດ້ພົບ; ແລະ [ກ]ຄວາມລຶກລັບຂອງ
ພຣະ ເຈົ້າຈະຖືກເປີດ ອອກ ໃຫ້ແກ່ພວກ
ເຂົາ, ໂດຍອຳນາດຂອງ [ຂ]ພຣະວິນຍານບໍລິ
ສຸດ, ໃນສະໄໝນີ້ກໍຄືກັນກັບສະໄໝກ່ອນ,
ແລະ ສະໄໝກ່ອນກໍຄືກັນກັບສະໄໝທີ່ຈະ
ມາເຖິງ; ດັ່ງນັ້ນ, [ຄ]ເສັ້ນທາງເດີນຂອງພຣະ
ຜູ້ເປັນເຈົ້າຈຶ່ງເປັນຮອບໜຶ່ງທີ່ເປັນຊົ່ວນິລັນ
ດອນ.
20 ສະນັ້ນ, ໂອ້ມະນຸດ, ຈົ່ງຈຳໄວ້ວ່າ, ທ່ານ
ຈະຖືກນຳມາຫາ [ກ]ການພິພາກສາເພາະ
ການກະທຳທຸກຢ່າງຂອງທ່ານ.
21 ດັ່ງນັ້ນ, ຖ້າຫາກທ່ານພະຍາຍາມ
ເຮັດຄວາມຊົ່ວໃນວັນເວລາແຫ່ງ [ກ]ການ
ທົດລອງຂອງທ່ານ, ເວລານັ້ນທ່ານຈະ
ເຫັນວ່າທ່ານເປັນຜູ້ທີ່ [ຂ]ເປິເປື້ອນຕໍ່ໜ້າບັນ
ລັງພິພາກສາຂອງພຣະເຈົ້າ; ແລະ ສິ່ງທີ່
ເປິເປື້ອນຈະບໍ່ສາມາດຢູ່ກັບພຣະເຈົ້າໄດ້;
ດັ່ງນັ້ນ, ທ່ານກໍຈະຖືກປະຖິ້ມຕະຫລອດ
ການ.
22 ແລະ ພຣະວິນຍານບໍລິສຸດໄດ້ປະ
ທານສິດອຳນາດເພື່ອໃຫ້ຂ້າພະເຈົ້າເວົ້າ
ເລື່ອງເຫລົ່ານີ້, ແລະ ບໍ່ປະຕິເສດ ເລື່ອງ
ເຫລົ່ານີ້ອີກ.

## ບົດທີ 11

*ນີໄຟ ເຫັນພຣະວິນຍານຂອງພຣະຜູ້ເປັນເຈົ້າ ແລະ ເຫັນພາບນິມິດຂອງຕົ້ນໄມ້ແຫ່ງຊີວິດ—ເພິ່ນເຫັນມານດາຂອງພຣະບຸດຂອງພຣະເຈົ້າ ແລະ ຮຽນຮູ້ເຖິງພຣະເມດຕາກະລຸນາຂອງພຣະເຈົ້າ—ເພິ່ນເຫັນການບັບຕິສະມາ, ການປະຕິບັດສາດສະໜາກິດ, ແລະ ການຄຶງໄວ້ເທິງໄມ້ກາງແຂນຂອງພຣະເມສານ້ອຍຂອງພຣະເຈົ້າ—ເພິ່ນເຫັນການເອີ້ນ ແລະ ການປະຕິບັດສາດສະໜາກິດຂອງອັກຄະສາວົກສິບສອງຂອງພຣະເມສານ້ອຍ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກຂ້າພະເຈົ້າປາດຖະໜາຢາກຮູ້ເລື່ອງ
ທີ່ບິດາຂອງຂ້າພະເຈົ້າໄດ້ເຫັນມາ, ແລະ
ເຊື່ອວ່າພຣະຜູ້ເປັນເຈົ້າສາມາດເຮັດໃຫ້ຂ້າ
ພະເຈົ້າຮູ້ເຖິງເລື່ອງນີ້ໄດ້, ໃນຂະນະທີ່ຂ້າ
ພະເຈົ້ານັ່ງ [ກ]ໄຕ່ຕອງຢູ່ໃນໃຈຢູ່ນັ້ນ, ຂ້າພະ
ເຈົ້າກໍຖືກ [ຂ]ພາໄປໃນພຣະວິນຍານຂອງ
ພຣະຜູ້ເປັນເຈົ້າ, ແທ້ຈິງແລ້ວ, ແມ່ນຖືກພາ
ຂຶ້ນໄປເທິງ [ຄ]ພູໜ່ວຍໜຶ່ງທີ່ສູງທີ່ສຸດ, ຊຶ່ງຂ້າ
ພະເຈົ້າບໍ່ເຄີຍເຫັນ ແລະ ບໍ່ເຄີຍຢຽບມັນມາ
ກ່ອນເລີຍ.
2 ແລະ ພຣະວິນຍານໄດ້ກ່າວກັບຂ້າພະ
ເຈົ້າວ່າ: ຈົ່ງເບິ່ງ, ເຈົ້າປາດຖະໜາສິ່ງໃດ?
3 ແລະ ຂ້າພະເຈົ້າໄດ້ທູນວ່າ: ຂ້ານ້ອຍ
ປາດຖະໜາເຫັນສິ່ງທີ່ບິດາຂອງຂ້ານ້ອຍ
[ກ]ເຫັນມາ.

---

19 *ກ* ຄມພ ຄວາມລຶກລັບຂອງພຣະເຈົ້າ.
*ຂ* ຄມພ ພຣະວິນຍານບໍລິສຸດ.
*ຄ* ແອວ 7:20; ຄພ 3:2; 35:1.
20 *ກ* ປຍຈ 12:14; 2 ນຟ 9:46. ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
21 *ກ* ແອວ 34:32–35.
*ຂ* 1 ກຣທ 6:9–10; 3 ນຟ 27:19; ຄພ 76:50–62; ມຊ 6:57.
**11** 1 *ກ* ຄພ 76:19. ຄມພ ໄຕ່ຕອງ.
*ຂ* 2 ກຣທ 12:1–4; ພນມ 21:10; 2 ນຟ 4:25; ມຊ 1:1.
*ຄ* ພບຍ 10:1; ອທ 3:1.
3 *ກ* 1 ນຟ 8:2–34.

4 ແລະ ພຣະວິນຍານໄດ້ກ່າວກັບຂ້າພະ
ເຈົ້າວ່າ: ເຈົ້າເຊື່ອບໍ ວ່າບິດາຂອງເຈົ້າເຫັນ
[ກ]ຕົ້ນໄມ້ທີ່ເພິ່ນເວົ້າເຖິງນັ້ນ?
5 ແລະ ຂ້າພະເຈົ້າໄດ້ທູນວ່າ: ແທ້ຈິງ
ແລ້ວ, ພຣະອົງຮູ້ວ່າຂ້ານ້ອຍ [ກ]ເຊື່ອຄຳເວົ້າ
ທັງໝົດຂອງບິດາຂອງຂ້ານ້ອຍ.
6 ແລະ ເມື່ອຂ້າພະເຈົ້າເວົ້າຂໍ້ຄວາມນີ້
ແລ້ວ, ພຣະວິນຍານກໍຮ້ອງຂຶ້ນດ້ວຍສຽງ
ອັນດັງ, ມີຄຳວ່າ: ໂຮຊັນນາ ແດ່ພຣະຜູ້ເປັນ
ເຈົ້າ, ພຣະເຈົ້າສູງສຸດ; ເພາະພຣະອົງເປັນ
ພຣະເຈົ້າເໜືອ [ກ]ແຜ່ນດິນໂລກທັງສິ້ນ, ແທ້
ຈິງແລ້ວ, ແມ່ນ ເໜືອທຸກສິ່ງທຸກຢ່າງ. ແລະ
ເຈົ້າເປັນສຸກແລ້ວນີໄຟເພາະວ່າເຈົ້າ [ຂ]ເຊື່ອ
ໃນພຣະບຸດຂອງພຣະເຈົ້າສູງສຸດ; ດັ່ງນັ້ນ,
ເຈົ້າຈະໄດ້ເຫັນສິ່ງທີ່ເຈົ້າປາດຖະໜາ.
7 ແລະ ຈົ່ງເບິ່ງ ສິ່ງເຫລົ່ານີ້ຈະໄດ້ມອບ
ໃຫ້ເຈົ້າເປັນ [ກ]ເຄື່ອງໝາຍ, ຄືຫລັງຈາກເຈົ້າ
ເຫັນຕົ້ນໄມ້ທີ່ມີໝາກ ຊຶ່ງບິດາຂອງເຈົ້າໄດ້
ຊີມມາແລ້ວ, ເຈົ້າຈະເຫັນຊາຍຄົນໜຶ່ງລົງ
ມາຈາກສະຫວັນນຳອີກ, ແລະ ເຈົ້າຈະເຫັນ
ຜູ້ນັ້ນກັບຕາ; ແລະ ຫລັງຈາກເຈົ້າເຫັນຜູ້
ນັ້ນແລ້ວ ເຈົ້າຈະ [ຂ]ເປັນພະຍານວ່າ ນັ້ນຄື
ພຣະບຸດຂອງພຣະເຈົ້າ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ວິນຍານໄດ້ກ່າວກັບຂ້າພະເຈົ້າວ່າ: ເບິ່ງ
ເຖີດ! ແລະ ຂ້າພະເຈົ້າເບິ່ງ ແລະ ເຫັນຕົ້ນ
ໄມ້ຕົ້ນໜຶ່ງ; ແລະ ມັນຄືກັນກັບ [ກ]ຕົ້ນໄມ້ທີ່
ບິດາຂອງຂ້າພະເຈົ້າເຫັນມາ; ແລະ ຄວາມ
ງາມຂອງມັນ ເໜືອກວ່າຄວາມງາມໃດໆ
ທັງສິ້ນ; ແລະ [ຂ]ຄວາມຂາວຂອງຕົ້ນໄມ້ນັ້ນ
ຂາວກວ່າຄວາມຂາວຂອງຫິມະ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ຂ້າພະເຈົ້າໄດ້ເຫັນຕົ້ນໄມ້ແລ້ວ, ຂ້າ
ພະເຈົ້າໄດ້ເວົ້າຕໍ່ພຣະວິນຍານວ່າ: ພຣະ
ອົງໄດ້ສະແດງຕົ້ນໄມ້ທີ່ມີ [ກ]ຄຸນຄ່າເໜືອ
ກວ່າທຸກສິ່ງທຸກຢ່າງໃຫ້ຂ້ານ້ອຍເຫັນ.
10 ແລະ ພຣະອົງໄດ້ຖາມຂ້າພະເຈົ້າວ່າ:
ເຈົ້າປາດຖະໜາອັນໃດ?
11 ແລະ ຂ້າພະເຈົ້າໄດ້ທູນພຣະອົງວ່າ:
ຢາກຈະຮູ້ເຖິງ [ກ]ຄວາມໝາຍຂອງມັນ—
ເພາະຂ້າພະເຈົ້າເວົ້າກັບພຣະອົງຄືກັນກັບ
ຄົນລົມກັນ; ເພາະຂ້າພະເຈົ້າເຫັນວ່າ ພຣະ
ອົງຢູ່ໃນ [ຂ]ຮູບຂອງມະນຸດ; ເຖິງຢ່າງໃດກໍ
ຕາມ, ຂ້າພະເຈົ້າຮູ້ວ່າເປັນພຣະວິນຍານ
ຂອງພຣະຜູ້ເປັນເຈົ້າ; ແລະ ພຣະອົງຮັບສັ່ງ
ກັບຂ້າພະເຈົ້າຄືກັນກັບຄົນລົມກັນ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະອົງໄດ້ກ່າວກັບຂ້າພະເຈົ້າວ່າ: ເບິ່ງ
ເຖີດ! ແລະ ຂ້າພະເຈົ້າເບິ່ງຄາວໜຶ່ງວ່າ ຈະ
ເຫັນພຣະອົງ, ແລະ ຂ້າພະເຈົ້າບໍ່ໄດ້ເຫັນ
ພຣະອົງອີກເລີຍ; ເພາະພຣະອົງສະເດັດ
ໄປແລ້ວຕໍ່ໜ້າຂ້າພະເຈົ້າ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຂ້າພະເຈົ້າໄດ້ເບິ່ງມະຫານະຄອນເຢຣູ
ຊາເລັມ, ແລະ ເມືອງອື່ນໆ. ພ້ອມທັງເມືອງ
ນາຊາເຣັດນຳອີກ; ແລະ ໃນເມືອງ [ກ]ນາຊາ
ເຣັດນັ້ນ ຂ້າພະເຈົ້າເຫັນຍິງຜູ້ [ຂ]ບໍລິສຸດຄົນ
ໜຶ່ງ, ແລະ ນາງທັງຂາວ ແລະ ງາມທີ່ສຸດ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນ [ກ]ຟ້າສະຫວັນເປີດ; ແລະ

4 *ກ* 1 ນຟ 8:10–12; 15:21–22.
5 *ກ* 1 ນຟ 2:16.
6 *ກ* ອພຍ 9:29; 2 ນຟ 29:7; 3 ນຟ 11:14; ມຊ 6:44.
*ຂ* ຄມພ ເຊື່ອ, ຄວາມເຊື່ອ.
7 *ກ* ຄມພ ເຄື່ອງໝາຍ.
*ຂ* ຄມພ ປະຈັກພະຍານ.
8 *ກ* 1 ນຟ 8:10.
*ຂ* 1 ນຟ 8:11.
9 *ກ* 1 ນຟ 11:22–25.
11 *ກ* ປຖກ 40:8.
*ຂ* ອທ 3:15–16.
13 *ກ* ມທ 2:23.
*ຂ* ລກ 1:26–27; ແອວ 7:10. ຄມພ ມາຣີ, ມານດາຂອງພຣະເຢຊູ.
14 *ກ* ອຊກ 1:1; 1 ນຟ 1:8.

ທູດອົງໜຶ່ງລົງມາຢືນຢູ່ຕໍ່ໜ້າຂ້າພະເຈົ້າ;
ແລະ ພຣະອົງ ໄດ້ ຖາມ ຂ້າ ພະ ເຈົ້າ ວ່າ:
ນີໄຟ, ເຈົ້າເຫັນອັນໃດແດ່?
15 ແລະ ຂ້າພະເຈົ້າໄດ້ຕອບເພິ່ນວ່າ: ຜູ້
ຍິງບໍລິສຸດຄົນໜຶ່ງທີ່ຈົບງາມທີ່ສຸດເກີນກວ່າ
ຜູ້ຍິງບໍລິສຸດຄົນອື່ນໆ.
16 ແລະ ເພິ່ນໄດ້ຖາມຂ້າພະເຈົ້າວ່າ:
ເຈົ້າຮູ້ຈັກພຣະເມດຕາກະລຸນາຂອງພຣະ
ເຈົ້າບໍ່?
17 ແລະ ຂ້າ ພະ ເຈົ້າ ໄດ້ ຕອບ ເພິ່ນ ວ່າ:
ຂ້ານ້ອຍຮູ້ວ່າພຣະອົງຮັກລູກໆຂອງພຣະ
ອົງ; ເຖິງຢ່າງໃດກໍຕາມ, ຂ້ານ້ອຍກໍບໍ່ຮູ້ເຖິງ
ຄວາມໝາຍໝົດທຸກຢ່າງ.
18 ແລະ ເພິ່ນໄດ້ກ່າວກັບຂ້າພະເຈົ້າ
ວ່າ: ຈົ່ງເບິ່ງ, ຜູ້ຍິງ [ກ]ບໍລິສຸດທີ່ເຈົ້າເຫັນຄື
[ຂ]ມານດາຂອງພຣະບຸດຂອງພຣະເຈົ້າທາງ
ເນື້ອໜັງ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າເຫັນວ່ານາງຖືກນໍາໄປທາງພຣະ
ວິນຍານຊົ່ວໄລຍະໜຶ່ງ; ແລະ ຫລັງຈາກ
ນາງໄດ້ຖືກນໍາໄປທາງ [ກ]ພຣະວິນຍານຊົ່ວ
ໄລຍະໜຶ່ງແລ້ວ ທູດໄດ້ກ່າວກັບຂ້າພະເຈົ້າ
ມີຄວາມວ່າ: ເບິ່ງເຖີດ!
20 ແລະ ຂ້າພະເຈົ້າເບິ່ງ ແລະ ເຫັນຍິງ
ບໍລິສຸດຜູ້ນັ້ນອີກກໍາລັງອູ້ມ [ກ]ແອນ້ອຍຜູ້ໜຶ່ງ
ໄວ້ໃນອ້ອມແຂນ.
21 ແລະ ທູດໄດ້ກ່າວກັບຂ້າພະເຈົ້າວ່າ:
ຈົ່ງເບິ່ງ [ກ]ພຣະເມສານ້ອຍຂອງພຣະເຈົ້າ,
ແທ້ຈິງແລ້ວ, ແມ່ນ [ຂ]ພຣະບຸດຂອງ [ຄ]ພຣະ
ບິດາຜູ້ສະຖິດນິລັນດອນ! ເຈົ້າຮູ້ຈັກຄວາມ
ໝາຍຂອງ [ງ]ຕົ້ນໄມ້ທີ່ບິດາຂອງເຈົ້າເຫັນ
ບໍ?
22 ແລະ ຂ້າພະເຈົ້າໄດ້ຕອບພຣະອົງ, ມີ
ຄວາມວ່າ: ແທ້ຈິງແລ້ວ, ຄື [ກ]ຄວາມຮັກຂອງ
ພຣະເຈົ້າ, ຊຶ່ງແຜ່ຜາຍອອກມາຫາໃຈຂອງ
ລູກຫລານມະນຸດ; ດັ່ງນັ້ນ, ມັນຈຶ່ງເປັນທີ່
ເພິ່ງປາດຖະໜາທີ່ສຸດເໜືອກວ່າທຸກສິ່ງທຸກ
ຢ່າງທັງສິ້ນ.
23 ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າ
ມີຄວາມວ່າ: ແທ້ຈິງແລ້ວ, ແລະ ເປັນທີ່ [ກ]ປີ
ຕິຍິນດີທີ່ສຸດແກ່ຈິດວິນຍານ.
24 ແລະ ຫລັງຈາກທີ່ພຣະອົງໄດ້ກ່າວ
ຂໍ້ຄວາມນີ້ແລ້ວ, ພຣະອົງໄດ້ກ່າວກັບຂ້າ
ພະເຈົ້າວ່າ: ເບິ່ງເຖີດ! ແລະ ຂ້າພະເຈົ້າ
ເບິ່ງ, ແລະ ຂ້າພະເຈົ້າເຫັນພຣະບຸດຂອງ
ພຣະເຈົ້າ [ກ]ສະເດັດອອກໄປໃນບັນດາລູກ
ຫລານມະນຸດ; ແລະ ຂ້າພະເຈົ້າໄດ້ເຫັນ
ຄົນຈໍານວນຫລວງຫລາຍລົ້ມລົງແທບພຣະ
ບາດຂອງພຣະອົງ ແລະ ນະມັດສະການ
ພຣະອົງ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າເຫັນ [ກ]ຮາວເຫລັກ, ຊຶ່ງບິດາຂອງ
ຂ້າພະເຈົ້າໄດ້ເຫັນ, ຄືພຣະຄໍາຂອງພຣະ
ເຈົ້າ, ຊຶ່ງນໍາພາໄປຫາ [ຂ]ນໍ້າພຸທີ່ປະກອບ
ດ້ວຍຊີວິດ, ຫລື ນໍາພາໄປຫາ [ຄ]ຕົ້ນໄມ້ແຫ່ງ
ຊີວິດ; ຊຶ່ງນໍ້າເປັນຕົວແທນໃຫ້ແກ່ຄວາມ
ຮັກຂອງພຣະເຈົ້າ; ແລະ ຂ້າພະເຈົ້າເຫັນ
ອີກວ່າ ຕົ້ນໄມ້ແຫ່ງຊີວິດເປັນຕົວແທນໃຫ້

18 *ກ* ອຊຢ 7:14; ລກ 1:34–35.
*ຂ* ມຊຢ 3:8.
19 *ກ* ມທ 1:20.
20 *ກ* ລກ 2:16.
21 *ກ* ຄມພ ພຣະເມສານ້ອຍຂອງພຣະເຈົ້າ.
*ຂ* ຄມພ ພຣະເຢຊູຄຣິດ.
*ຄ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ງ* 1 ນຟ 8:10; ແອວ 5:62. ຄມພ ຕົ້ນໄມ້ແຫ່ງຊີວິດ.
22 *ກ* ຄມພ ຮັກ, ຄວາມຮັກ.
23 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
24 *ກ* ລກ 4:14–21.
25 *ກ* 1 ນຟ 8:19.
*ຂ* ຄມພ ນໍ້າທີ່ປະກອບດ້ວຍຊີວິດ.
*ຄ* ປຖກ 2:9; ແອວ 32:40–41; ມຊ 4:28, 31.

ແກ່ຄວາມຮັກຂອງພຣະເຈົ້າຄືກັນ.
26 ແລະ ທູດໄດ້ກ່າວກັບຂ້າພະເຈົ້າອີກ
ວ່າ: ເບິ່ງເຖີດ ແລະ ຈົ່ງເບິ່ງ [ກ]ພຣະເມດຕາ
ກະລຸນາຂອງພຣະເຈົ້າ!
27 ແລະ ຂ້າພະເຈົ້າໄດ້ເບິ່ງ ແລະ ໄດ້
[ກ]ເຫັນພຣະຜູ້ໄຖ່ຂອງໂລກ, ຊຶ່ງບິດາຂອງ
ຂ້າພະເຈົ້າໄດ້ເວົ້າເຖິງ; ແລະ ຂ້າພະເຈົ້າ
ຍັງໄດ້ເຫັນ [ຂ]ສາດສະດາຜູ້ທີ່ຈະຕຽມທາງ
ໄວ້ກ່ອນພຣະອົງ. ແລະ ພຣະເມສານ້ອຍ
ຂອງພຣະເຈົ້າໄດ້ສະເດັດອອກໄປ ແລະ
ຮັບ [ຄ]ບັບຕິສະມາຈາກເພິ່ນ; ແລະ ຫລັງ
ຈາກພຣະອົງຮັບບັບຕິສະມາແລ້ວ, ຂ້າພະ
ເຈົ້າໄດ້ເຫັນຟ້າສະຫວັນເປີດ, ແລະ ພຣະ
ວິນຍານບໍລິສຸດເປັນແບບຕົວ [ງ]ນົກເຂົາສະ
ເດັດລົງຈາກສະຫວັນມາສະຖິດຢູ່ເທິງພຣະ
ອົງ.
28 ແລະ ຂ້າພະເຈົ້າເຫັນພຣະອົງສະ
ເດັດອອກໄປປະຕິບັດສາດສະໜາກິດ
ແກ່ຜູ້ຄົນ, ດ້ວຍ [ກ]ອຳນາດ ແລະ ລັດສະ
ໝີພາບອັນຍິ່ງໃຫຍ່; ແລະ ຝູງຊົນເປັນ
ຈຳນວນຫລວງຫລາຍໄດ້ມາເຕົ້າໂຮມກັນ
ເພື່ອຟັງພຣະອົງ; ແລະ ຂ້າພະເຈົ້າໄດ້ເຫັນ
ວ່າ ພຣະອົງຖືກຂັບໄລ່ອອກຈາກບັນດາ
ພວກເຂົາ.
29 ແລະ ຂ້າພະເຈົ້າໄດ້ເຫັນຄົນອີກ [ກ]ສິບ
ສອງຄົນ ຊຶ່ງຕິດຕາມພຣະອົງໄປ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ຄົນເຫລົ່ານັ້ນ
ຖືກນຳໄປໃນພຣະວິນຍານຈາກໜ້າຂ້າພະ
ເຈົ້າ, ແລ້ວຂ້າພະເຈົ້າກໍບໍ່ເຫັນພວກເພິ່ນ
ເຫລົ່ານັ້ນອີກ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດ
ໄດ້ກ່າວກັບຂ້າພະເຈົ້າ, ມີຄວາມວ່າ: ເບິ່ງ
ເຖີດ! ແລະ ຂ້າພະເຈົ້າໄດ້ເບິ່ງ, ແລະ ຂ້າ
ພະເຈົ້າເຫັນຟ້າສະຫວັນເປີດອີກ, ແລະ
ຂ້າພະເຈົ້າເຫັນ [ກ]ເຫລົ່າທູດລົງມາຫາລູກ
ຫລານມະນຸດ; ແລະ ພວກເພິ່ນໄດ້ປະຕິ
ບັດແກ່ພວກເຂົາ.
31 ແລະ ທູດໄດ້ກ່າວກັບຂ້າພະເຈົ້າອີກ,
ມີຄວາມວ່າ: ເບິ່ງເຖີດ! ແລະ ຂ້າພະເຈົ້າ
ໄດ້ເບິ່ງ, ແລະ ຂ້າພະເຈົ້າໄດ້ເຫັນພຣະ
ເມສານ້ອຍຂອງພຣະເຈົ້າສະເດັດອອກໄປ
ໃນບັນດາລູກຫລານມະນຸດ. ແລະ ຂ້າພະ
ເຈົ້າເຫັນຝູງຊົນຢ່າງຫລວງຫລາຍຜູ້ເຈັບ
ໄຂ້, ແລະ ຜູ້ເປັນທຸກດ້ວຍພະຍາດນາໆ
ຊະນິດ, ແລະ ດ້ວຍ [ກ]ຜີສາງ ແລະ ດ້ວຍ
[ຂ]ວິນຍານອັນບໍ່ສະອາດ; ແລະ ທູດໄດ້ກ່າວ
ແລະ ສະແດງສິ່ງທັງໝົດນີ້ແກ່ຂ້າພະເຈົ້າ.
ແລະ ຄົນເຫລົ່ານັ້ນໄດ້ຮັບການ [ຄ]ປິ່ນປົວ
ໂດຍອຳນາດຂອງພຣະເມສານ້ອຍຂອງ
ພຣະເຈົ້າ; ແລະ ຜີສາງ ແລະ ວິນຍານອັນ
ບໍ່ສະອາດຖືກຂັບໄລ່ອອກໄປ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດ
ໄດ້ກ່າວກັບຂ້າພະເຈົ້າອີກ, ມີຄວາມວ່າ:
ເບິ່ງເຖີດ! ແລະ ຂ້າພະເຈົ້າໄດ້ເບິ່ງ ແລະ
ຂ້າພະເຈົ້າໄດ້ເຫັນພຣະເມສານ້ອຍຂອງ
ພຣະເຈົ້າ, ວ່າພຣະອົງໄດ້ຖືກຜູ້ຄົນຈັບ
ໄປ; ແທ້ຈິງແລ້ວ, ແມ່ນພຣະບຸດຂອງພຣະ
ເຈົ້າຜູ້ເປັນນິດໄດ້ຖືກ [ກ]ຕັດສິນໂດຍທາງ
ໂລກ; ແລະ ຂ້າພະເຈົ້າໄດ້ເຫັນ ແລະ ເປັນ
ພະຍານ.

26 *ກ* 1 ນຟ 11:16–33.
27 *ກ* 2 ນຟ 25:13.
*ຂ* ມທ 11:10; 1 ນຟ 10:7–10; 2 ນຟ 31:4.
*ຄ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ງ* ຄມພ ນົກເຂົາ, ເຄື່ອງໝາຍຂອງ.
28 *ກ* ຄພ 138:25–26.
29 *ກ* ຄມພ ອັກຄະສາວົກ.
30 *ກ* ຄມພ ທູດ, ເທວະດາ.
31 *ກ* ມຣກ 5:15–20; ມຊຢ 3:5–7. ຄມພ ມານ.
*ຂ* ຄມພ ວິນຍານ—ຜີມານຮ້າຍ.
*ຄ* ຄມພ ປິ່ນປົວ, ການປິ່ນປົວ.
32 *ກ* ມຣກ 15:17–20.

33 ແລະ ຂ້າ ພະ ເຈົ້າ ນີໄຟ ໄດ້ ເຫັນ ວ່າ
ພຣະ ອົງ ຖືກ ຍົກ ຂຶ້ນ ເທິງ [ກ]ໄມ້ກາງ ແຂນ
ແລະ ຖືກ [ຂ]ປະຫານເພື່ອບາບຂອງໂລກ.
34 ແລະ ຫລັງຈາກພຣະອົງຖືກປະຫານ
ແລ້ວ, ຂ້າພະ ເຈົ້າໄດ້ເຫັນຝູງຊົນ ຂອງ
ແຜ່ນດິນໂລກມາເຕົ້າໂຮມກັນເພື່ອຕໍ່ສູ້ກັບ
ອັກຄະສາວົກຂອງພຣະເມສານ້ອຍ; ເພາະ
ສິບສອງທ່ານນີ້ໄດ້ຖືກເອີ້ນແນວນັ້ນໂດຍ
ທູດຂອງພຣະຜູ້ເປັນເຈົ້າ.
35 ແລະ ຝູງຊົນຂອງແຜ່ນດິນໂລກໄດ້
ມາເຕົ້າໂຮມກັນ; ແລະ ຂ້າພະເຈົ້າໄດ້ເຫັນ
ວ່າ ພວກເຂົາຢູ່ໃນ [ກ]ອາຄານໃຫຍ່ ແລະ
ກວ້າງຫລັງໜຶ່ງ ຊຶ່ງຄືກັນກັບອາຄານທີ່ບິດາ
ຂອງຂ້າພະເຈົ້າໄດ້ເຫັນນັ້ນ. ແລະ ທູດຂອງ
ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າ
ອີກ, ມີຄວາມວ່າ: ຈົ່ງເບິ່ງໂລກ ແລະ ປັນ
ຍາຂອງມັນ; ແທ້ຈິງແລ້ວ, ຈົ່ງເບິ່ງເຊື້ອສາຍ
ອິດສະຣາເອນໄດ້ມາເຕົ້າໂຮມກັນເພື່ອຕໍ່ສູ້
ກັບອັກຄະສາວົກສິບສອງຂອງພຣະເມສາ
ນ້ອຍນັ້ນ.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນ ແລະ ເປັນພະຍານວ່າ ອາ
ຄານ ໃຫຍ່ ແລະ ກວ້າງຫລັງ ນີ້ຄື [ກ]ຄວາມ
ຈອງ ຫອງ ຂອງ ໂລກ; ແລະ ມັນຈະຕົກ,
ແລະ ການຕົກຂອງມັນຈະໃຫຍ່ຫລວງຢ່າງ
ໜັກ. ແລະ ທູດຂອງພຣະຜູ້ເປັນເຈົ້າໄດ້
ກ່າວກັບຂ້າພະເຈົ້າ, ມີຄວາມວ່າ: ຄວາມ
ພິນາດຂອງທຸກປະຊາຊາດ, ທຸກຕະກຸນ,
ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, ຜູ້ຕໍ່ສູ້
ກັບອັກຄະສາວົກສິບສອງຂອງພຣະເມສາ
ນ້ອຍຈະເປັນດັ່ງນັ້ນ.

## ບົດທີ 12

*ນີໄຟເຫັນພາບນິມິດກ່ຽວກັບແຜ່ນດິນແຫ່ງຄຳສັນຍາ; ຄວາມຊອບທຳ, ຄວາມຊົ່ວຮ້າຍ, ແລະ ການຕົກຂອງຜູ້ອາໄສເຫລົ່ານັ້ນ; ການສະເດັດມາຂອງພຣະເມສານ້ອຍຂອງພຣະເຈົ້າໃນບັນດາພວກເຂົາ; ວິທີທີ່ສານຸສິດສິບສອງຄົນກັບອັກຄະສາວົກສິບສອງຈະຕັດສິນອິດສະຣາເອນ; ຄວາມໜ້າລັງກຽດ ແລະ ສົກກະປົກຂອງຜູ້ທີ່ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດ
ໄດ້ກ່າວກັບຂ້າພະເຈົ້າວ່າ: ເບິ່ງເຖີດ, ແລະ
ຈົ່ງ ເບິ່ງ ລູກ ຫລານ ຂອງ ເຈົ້າ ແລະ ລູກ
ຫລານ ຂອງ ພວກອ້າຍຂອງເຈົ້ານຳອີກ.
ແລະ ຂ້າພະເຈົ້າໄດ້ຫລຽວເບິ່ງ ແລະ ໄດ້
ເຫັນ [ກ]ແຜ່ນດິນແຫ່ງຄຳສັນຍາ; ແລະ ຂ້າ
ພະເຈົ້າໄດ້ເຫັນຝູງຊົນ, ແທ້ຈິງແລ້ວ, ແມ່ນ
ແຕ່ຄືກັບວ່າ ເປັນຄົນຈຳນວນຫລວງຫລາຍ
ຄືກັນກັບເມັດຊາຍໃນທະເລ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນຝູງຊົນມາເຕົ້າໂຮມເພື່ອສູ້
ຮົບກັນ; ແລະ ຕໍ່ສູ້ຊຶ່ງກັນແລະກັນ; ແລະ
ຂ້າພະເຈົ້າໄດ້ເຫັນ [ກ]ສົງຄາມ, ແລະ ຂ່າວ
ລືເລື່ອງສົງຄາມ, ແລະ ການຂ້າຟັນກັນຢ່າງ
ໜັກດ້ວຍດາບໃນບັນດາຜູ້ຄົນຂອງຂ້າພະ
ເຈົ້າ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະ ເຈົ້າ ໄດ້ ເຫັນ ຫລາຍ ລຸ້ນ ຄົນ ຜ່ານ ໄປ,
ຫລັງຈາກສົງຄາມ ແລະ ການຂັດແຍ້ງກັນ

33 *ກ* ຢຮ 19:16–19; ມຊຢ 3:9–10; 3 ນຟ 27:14. ຄມພ ໄມ້ກາງແຂນ.
*ຂ* ຄມພ ຊົດໃຊ້, ການຊົດໃຊ້.
35 *ກ* 1 ນຟ 8:26; 12:18.
36 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
**12** 1 *ກ* ຄມພ ແຜ່ນດິນແຫ່ງຄຳສັນຍາ.
2 *ກ* ອນ 1:24; ມມ 8:7–8. ຄມພ ສົງຄາມ.

ໃນແຜ່ນດິນຜ່ານໄປ; ແລະ ຂ້າພະເຈົ້າໄດ້
ເຫັນຫລາຍຫົວເມືອງ, ແທ້ຈິງແລ້ວ, ຈົນວ່າ
ຂ້າພະເຈົ້ານັບບໍ່ຖ້ວນ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນ [ກ]ໝອກແຫ່ງ [ຂ]ຄວາມມືດຢູ່
ໃນແຜ່ນດິນແຫ່ງຄຳສັນຍາ; ແລະ ຂ້າພະ
ເຈົ້າໄດ້ເຫັນແສງຟ້າແມບ, ແລະ ຂ້າພະ
ເຈົ້າໄດ້ຍິນສຽງຟ້າຮ້ອງ, ແລະ ແຜ່ນດິນ
ໄຫວ, ແລະ ສຽງກຶກກ້ອງນາໆປະການ;
ແລະ ຂ້າພະເຈົ້າໄດ້ເຫັນແຜ່ນດິນ ແລະ
ກ້ອນຫີນ, ເປັນຮອຍແຍກ; ແລະ ຂ້າພະ
ເຈົ້າໄດ້ເຫັນພູເຂົາພັງທະລາຍແຕກເປັນ
ຫລາຍຊິ້ນສ່ວນ; ແລະ ຂ້າພະເຈົ້າໄດ້ເຫັນ
ທົ່ງພຽງຂອງແຜ່ນດິນໂລກ, ແຍກອອກ
ຈາກກັນ; ແລະ ຂ້າພະເຈົ້າໄດ້ເຫັນຫລາຍ
ຫົວເມືອງ [ຄ]ຈົມລົງ; ແລະ ຂ້າພະເຈົ້າໄດ້
ເຫັນຫລາຍຫົວເມືອງຖືກໄຟເຜົາຜານ;
ແລະ ຂ້າພະເຈົ້າໄດ້ເຫັນຫລາຍຫົວເມືອງ
ພັງລົງສູ່ແຜ່ນດິນໂລກ, ເພາະຄວາມສັ່ນ
ສະເທືອນຂອງໂລກ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ຂ້າພະເຈົ້າໄດ້ເຫັນສິ່ງເຫລົ່ານີ້ແລ້ວ,
ຂ້າພະເຈົ້າໄດ້ເຫັນ [ກ]ອາຍແຫ່ງຄວາມມືດ
ຜ່ານພົ້ນໄປຈາກໜ້າດິນ; ແລະ ຈົ່ງເບິ່ງ, ຂ້າ
ພະເຈົ້າໄດ້ເຫັນຝູງຊົນຢ່າງຫລວງຫລາຍຜູ້
ທີ່ບໍ່ໄດ້ຕົກລົງໄປຍ້ອນການພິພາກສາອັນ
ຍິ່ງໃຫຍ່ ແລະ ໜ້າຢ້ານກົວຂອງພຣະຜູ້
ເປັນເຈົ້າ.
6 ແລະ ຂ້າພະເຈົ້າໄດ້ເຫັນຟ້າສະຫວັນ
ເປີດ, ແລະ [ກ]ພຣະເມສານ້ອຍຂອງພຣະ
ເຈົ້າສະເດັດລົງມາຈາກສະຫວັນ; ແລະ
ພຣະອົງສະເດັດລົງມາປະກົດຕົວຕໍ່ພວກ
ເຂົາ.
7 ແລະ ຂ້າພະເຈົ້າໄດ້ເຫັນ ແລະ ເປັນ
ພະຍານອີກວ່າ ພຣະວິນຍານບໍລິສຸດໄດ້
ສະເດັດລົງມາຫາຄົນ [ກ]ສິບສອງຄົນນັ້ນ
ອີກ; ແລະ ພວກເຂົາໄດ້ຮັບການແຕ່ງຕັ້ງ
ໂດຍພຣະເຈົ້າ ແລະ ຖືກຄັດເລືອກ.
8 ແລະ ທູດໄດ້ກ່າວກັບຂ້າພະເຈົ້າ, ມີ
ຄວາມວ່າ: ຈົ່ງເບິ່ງສານຸສິດສິບສອງຄົນ
ຂອງພຣະເມສານ້ອຍ, ຜູ້ທີ່ໄດ້ຖືກເລືອກ
ໃຫ້ມາປະຕິບັດແກ່ລູກຫລານຂອງເຈົ້າ.
9 ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າ
ວ່າ: ເຈົ້າຈື່ [ກ]ອັກຄະສາວົກສິບສອງຄົນຂອງ
ພຣະເມສານ້ອຍໄດ້ບໍ? ຈົ່ງເບິ່ງ ພວກເພິ່ນ
ຄືຜູ້ທີ່ຈະມາ [ຂ]ຕັດສິນຝູງຊົນສິບສອງເຜົ່າ
ຂອງອິດສະຣາເອນ; ດັ່ງນັ້ນ, ຜູ້ປະຕິບັດ
ສາດສະໜາກິດ ສິບສອງຄົນຊຶ່ງເປັນລູກ
ຫລານຂອງເຈົ້າ ຈະຖືກຕັດສິນໂດຍພວກ
ເພິ່ນເຫລົ່ານັ້ນ; ເພາະພວກເພິ່ນເປັນເຊື້ອ
ສາຍອິດສະຣາເອນ.
10 ແລະ [ກ]ຜູ້ປະຕິບັດສາດສະໜາກິດສິບ
ສອງຄົນ ຊຶ່ງເຈົ້າເຫັນຢູ່ນີ້ຈະມາຕັດສິນລູກ
ຫລານຂອງເຈົ້າ. ແລະ ຈົ່ງເບິ່ງ, ຄົນເຫລົ່າ
ນີ້ເປັນຄົນຊອບທຳຕະຫລອດໄປ; ເພາະ
ເນື່ອງຈາກສັດທາຂອງພວກເພິ່ນທີ່ມີຕໍ່
ພຣະເມສານ້ອຍຂອງພຣະເຈົ້າ [ຂ]ອາພອນ
ຂອງພວກເພິ່ນຈຶ່ງຖືກເຮັດໃຫ້ຂາວສະອາດ
ໃນໂລຫິດຂອງພຣະອົງ.
11 ແລະ ທູດໄດ້ກ່າວກັບຂ້າພະເຈົ້າວ່າ:
ເບິ່ງເຖີດ! ແລະ ຂ້າພະເຈົ້າໄດ້ເບິ່ງ, ແລະ
ໄດ້ເຫັນຜູ້ຄົນ [ກ]ສາມລຸ້ນຄົນຜ່ານໄປດ້ວຍ

4 ກ ຣລມ 14:20–28.
ຂ 1 ນຟ 19:10.
ຄ 3 ນຟ 8:14.
5 ກ 3 ນຟ 8:20; 10:9.
6 ກ 2 ນຟ 26:1, 9; 3 ນຟ 11:3–17.
7 ກ 3 ນຟ 12:1; 19:12–13.
9 ກ ລກ 6:13.
ຂ ມທ 19:28; ຄພ 29:12. ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
10 ກ 3 ນຟ 27:27; ມມ 3:18–19.
ຂ ພນມ 7:14; ແອວ 5:21–27; 13:11–13; 3 ນຟ 27:19–20.
11 ກ 2 ນຟ 26:9–10; 3 ນຟ 27:30–32.

ຄວາມ ຊອບ ທຳ; ແລະ ອາ ພອນ ຂອງ ຄົນ
ເຫລົ່ານັ້ນຂາວຄືກັບຂອງພຣະເມສານ້ອຍ
ຂອງພຣະເຈົ້າ. ແລະ ທູດໄດ້ກ່າວກັບຂ້າ
ພະເຈົ້າວ່າ: ອາພອນເຫລົ່ານີ້ຖືກເຮັດໃຫ້
ຂາວສະອາດໃນໂລຫິດຂອງພຣະເມສາ
ນ້ອຍຍ້ອນວ່າພວກເຂົາມີສັດທາໃນພຣະ
ອົງ.
12 ແລະ ຂ້າພະເຈົ້ານີໄຟໄດ້ເຫັນຄົນລຸ້ນ
[ກ]ທີສີ່ຈຳນວນຫລວງຫລາຍ ຜູ້ທີ່ໄດ້ລ່ວງລັບ
ໄປໃນຄວາມຊອບທຳ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນຝູງຊົນຢ່າງຫລວງຫລາຍຢູ່
ໃນໂລກເຕົ້າໂຮມກັນ.
14 ແລະ ທູດ ໄດ້ ກ່າວ ກັບ ຂ້າ ພະ ເຈົ້າ
ວ່າ: ຈົ່ງເບິ່ງລູກຫລານຂອງເຈົ້າ, ແລະ ລູກ
ຫລານຂອງພວກອ້າຍຂອງເຈົ້ານຳອີກ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ຫລຽວເບິ່ງ ແລະ ເຫັນຜູ້ຄົນທີ່
ເປັນລູກຫລານຂອງຂ້າພະເຈົ້າເຕົ້າໂຮມ
ກັນເປັນກຸ່ມກ້ອນເພື່ອ [ກ]ຕໍ່ຕ້ານລູກຫລານ
ຂອງພວກອ້າຍຂອງຂ້າພະເຈົ້າ; ແລະ ຄົນ
ເຫລົ່ານັ້ນມາເຕົ້າໂຮມເພື່ອສູ້ຮົບກັນ.
16 ແລະ ທູດໄດ້ກ່າວກັບຂ້າພະເຈົ້າ, ມີ
ຄວາມວ່າ: ຈົ່ງເບິ່ງອ່າງນ້ຳ [ກ]ສົກກະປົກ ຊຶ່ງ
ບິດາຂອງເຈົ້າໄດ້ເຫັນ; ແທ້ຈິງແລ້ວ, ແມ່ນ
[ຂ]ແມ່ນ້ຳຊຶ່ງເຈົ້າເວົ້າເຖິງ; ແລະ ຄວາມເລິກ
ຂອງມັນນັ້ນຄືຄວາມເລິກຂອງ [ຄ]ນະລົກ.
17 ແລະ [ກ]ໝອກແຫ່ງຄວາມມືດຄືການລໍ້
ລວງຂອງມານທີ່ເຮັດໃຫ້ຕາ [ຂ]ບອດ ແລະ
ເຮັດໃຫ້ໃຈຂອງລູກຫລານມະນຸດແຂງກະ
ດ້າງ ແລະ ນຳພາພວກເຂົາໄປໃນ [ຄ]ເສັ້ນ
ທາງອັນກວ້າງຂວາງ,ເພື່ອພວກເຂົາຈະ
ຕາຍ ແລະ ຫາຍສາບສູນໄປ.
18 ແລະ [ກ]ອາຄານໃຫຍ່ ແລະ ກວ້າງ
ຊຶ່ງບິດາຂອງເຈົ້າໄດ້ເຫັນນັ້ນຄືຄວາມ
[ຂ]ຄຶດຝັນອັນບໍ່ມີປະໂຫຍດ ແລະ [ຄ]ຄວາມ
ທະນົງໃຈຂອງລູກຫລານມະນຸດ. ແລະ
[ງ]ເຫວເລິກອັນກວ້າງໃຫຍ່ ແລະ ໜ້າຢ້ານ
ກົວແຍກພວກເຂົາອອກຈາກກັນ; ແທ້ຈິງ
ແລ້ວ, ແມ່ນພຣະຄຳແຫ່ງ [ຈ]ຄວາມຍຸດຕິທຳ
ຂອງພຣະເຈົ້າຜູ້ສະຖິດນິລັນດອນ ແລະ
ພຣະເມຊີອາຜູ້ເປັນພຣະເມສານ້ອຍຂອງ
ພຣະເຈົ້າ, ຜູ້ທີ່ພຣະວິນຍານບໍລິສຸດເປັນ
ພະຍານນັບຕັ້ງແຕ່ການເລີ່ມຕົ້ນຂອງໂລກ
ຈົນເຖິງເວລານີ້, ແລະ ຈາກເວລານີ້ໄປຈົນ
ຕະຫລອດການ.
19 ແລະ ໃນຂະນະທີ່ທູດກຳລັງກ່າວຂໍ້
ຄວາມນີ້ຢູ່, ຂ້າພະເຈົ້າໄດ້ຫລຽວເບິ່ງ ແລະ
ໄດ້ເຫັນລູກຫລານຂອງພວກອ້າຍຂອງ
ຂ້າພະເຈົ້າຕໍ່ສູ້ກັບລູກຫລານຂອງຂ້າພະ
ເຈົ້າຕາມຄຳເວົ້າຂອງທູດອົງນັ້ນ; ເພາະວ່າ
ຄວາມທະນົງໃຈຂອງລູກຫລານຂອງຂ້າ
ພະເຈົ້າ ແລະ [ກ]ການລໍ້ລວງຂອງມານ, ຂ້າ
ພະເຈົ້າໄດ້ເຫັນລູກຫລານຂອງພວກອ້າຍ
ຂອງຂ້າພະເຈົ້າ [ຂ]ຊະນະຜູ້ຄົນທີ່ເປັນລູກ
ຫລານຂອງຂ້າພະເຈົ້າ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນ ແລະ ໄດ້ເບິ່ງລູກຫລານ

12 *ກ* ແອວ 45:10–12; ຣລມ 13:5, 9–10; 3 ນຟ 27:32; 4 ນຟ 1:14–27.
15 *ກ* ມມ 6.
16 *ກ* ຄມພ ສົກກະປົກ, ຄວາມສົກກະປົກ.
*ຂ* 1 ນຟ 8:13; 15:26–29.
*ຄ* ຄມພ ນະລົກ.
17 *ກ* 1 ນຟ 8:23; 15:24; ຄພ 10:20–32.
*ຂ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຄ* ມທ 7:13–14.
18 *ກ* 1 ນຟ 8:26; 11:35–36.
*ຂ* ຢມຢ 7:24.
*ຄ* ຄມພ ຈອງຫອງ, ຄວາມຈອງຫອງ.
*ງ* ລກ 16:26; 1 ນຟ 15:28–30.
*ຈ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
19 *ກ* ຄມພ ລໍ້ລວງ, ການລໍ້ລວງ.
*ຂ* ຈຣ 1:10; ຄມ 1:1–2.

ຂອງພວກອ້າຍຂອງຂ້າພະເຈົ້າວ່າ ພວກ
ເຂົາ ຊະນະລູກ ຫລານຂອງຂ້າພະ ເຈົ້າ;
ແລະ ພວກເຂົາເປັນຈຳນວນຫລວງຫລາຍ
ໄດ້ອອກໄປທົ່ວຜືນແຜ່ນດິນ.
21 ແລະ ຂ້າພະເຈົ້າໄດ້ເຫັນພວກເຂົາ
ເປັນ ຈຳນວນ ຫລວງ ຫລາຍ ມາ ເຕົ້າໂຮມ
ກັນ; ແລະ ຂ້າພະເຈົ້າໄດ້ເຫັນ [ກ]ສົງຄາມ
ແລະ ຂ່າວລືເລື່ອງສົງຄາມໃນບັນດາພວກ
ເຂົາ; ແລະ ໃນສົງຄາມ ແລະ ຂ່າວລືເລື່ອງ
ສົງຄາມນັ້ນ ຂ້າພະເຈົ້າໄດ້ເຫັນຫລາຍລຸ້ນ
ຄົນຜ່ານໄປ.
22 ແລະ ທູດໄດ້ກ່າວກັບຂ້າພະເຈົ້າວ່າ:
ຈົ່ງເບິ່ງຄົນເຫລົ່ານີ້ຈະ [ກ]ເສື່ອມໂຊມຢູ່ໃນ
ຄວາມບໍ່ເຊື່ອຖື.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນວ່າ, ຫລັງຈາກທີ່ພວກເຂົາ
ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖືແລ້ວ, ແລະ
ພວກເຂົາກໍໄດ້ກາຍເປັນຄົນ [ກ]ຜິວຄ້ຳ ແລະ
ໜ້າລັງກຽດ ແລະ [ຂ]ສົກກະປົກເຕັມໄປດ້ວຍ
[ຄ]ຄວາມກຽດຄ້ານ ແລະ ຄວາມໜ້າກຽດຊັງ
ທຸກຢ່າງ.

## ບົດທີ 13

*ນີໄຟເຫັນພາບນິມິດກ່ຽວກັບສາດສະໜາຈັກຂອງມານຖືກສ້າງຂຶ້ນຢູ່ໃນບັນດາຄົນຕ່າງຊາດ, ການຄົ້ນພົບ ແລະ ການສ້າງຕັ້ງອາເມຣິກາ, ການສູນເສຍຂໍ້ຄວາມຫລາຍຕອນ ຊຶ່ງແຈ່ມແຈ້ງ ແລະ ມີຄ່າໃນພຣະຄຣິສຕະທຳຄຳພີ, ຜົນຂອງການປະຖິ້ມຄວາມເຊື່ອຂອງຄົນຕ່າງຊາດ, ການຟື້ນຟູພຣະກິດຕິຄຸນ, ການກັບມາຂອງພຣະຄຳພີໃນຍຸກສຸດທ້າຍ, ແລະ ການສ້າງຕັ້ງຂອງຊີໂອນ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດ
ໄດ້ກ່າວກັບຂ້າພະເຈົ້າ ມີຄວາມວ່າ: ເບິ່ງ
ເຖີດ! ແລະ ຂ້າພະເຈົ້າຫລຽວເບິ່ງ ແລະ
ເຫັນຫລາຍປະຊາຊາດ ແລະ ຫລາຍອານາ
ຈັກ.
2 ແລະ ທູດໄດ້ຖາມຂ້າພະເຈົ້າວ່າ: ເຈົ້າ
ເຫັນ ຫຍັງແດ່? ຂ້າພະເຈົ້າ ຕອບ ວ່າ: ຂ້າ
ນ້ອຍເຫັນຫລາຍປະຊາຊາດ ແລະ ຫລາຍ
ອານາຈັກ.
3 ແລະ ເພິ່ນໄດ້ກ່າວກັບຂ້າພະເຈົ້າວ່າ:
ນີ້ຄືປະຊາຊາດ ແລະ ອານາຈັກຂອງຄົນ
ຕ່າງຊາດ.
4 ແລະ ເຫດການ ໄດ້ບັງ ເກີດ ຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນຮາກຖານຂອງ [ກ]ສາດສະ
ໜາຈັກໃຫຍ່ຢູ່ໃນບັນດາປະຊາຊາດຕ່າງໆ
ແລະ [ຂ]ຄົນຕ່າງຊາດ.
5 ແລະ ທູດ ໄດ້ກ່າວກັບຂ້າພະເຈົ້າວ່າ:
ຈົ່ງເບິ່ງຮາກຖານຂອງສາດສະໜາຈັກທີ່
ໜ້າກຽດຊັງທີ່ສຸດເໜືອກວ່າສາດສະໜາ
ຈັກໃດໆທັງສິ້ນ ຊຶ່ງ [ກ]ເຂັ່ນຂ້າໄພ່ພົນຂອງ
ພຣະເຈົ້າ, ແທ້ຈິງແລ້ວ, ແມ່ນທໍລະມານ
ພວກເຂົາ ແລະ ຜູກມັດພວກເຂົາ, ແລະ
ໃສ່ແອກພວກເຂົາໄວ້ດ້ວຍ [ຂ]ແອກເຫລັກ,
ແລະ ເອົາພວກເຂົາລົງມາຫາການເປັນຊະ
ເລີຍ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນສາດສະໜາຈັກ [ກ]ໃຫຍ່

21 *ກ* ມມ 8:8;
ມຣມ 1:2.
ຄມພ ສົງຄາມ.
22 *ກ* 1 ນຟ 15:13;
2 ນຟ 26:15.
23 *ກ* 2 ນຟ 26:33.
*ຂ* 2 ນຟ 5:20–25.
*ຄ* ຄມພ ກຽດຄ້ານ,
ຄວາມກຽດຄ້ານ.
**13** 4 *ກ* 1 ນຟ 13:26, 34;
14:3, 9–17.
*ຂ* ຄມພ ຄົນຕ່າງຊາດ.
5 *ກ* ພນມ 17:3–6;
1 ນຟ 14:13.
*ຂ* ຍມຍ 28:10–14.
6 *ກ* ຄພ 88:94.
ຄມພ ມານ—ສາດສະ
ໜາຈັກຂອງມານ.

ແລະ ໜ້າກຽດຊັງອັນນີ້; ແລະ ຂ້າພະເຈົ້າ
ໄດ້ເຫັນ [ຂ]ມານທີ່ປະກາດຕົນເອງວ່າ ເປັນ
ຮາກຖານຂອງມັນ.
7 ແລະ ຂ້າພະເຈົ້າໄດ້ເຫັນ [ກ]ຄຳ, ແລະ
ເງິນ, ແລະ ຜ້າໄໝ, ແລະ ຜ້າສີແດງສົດ,
ແລະ ຜ້າລິນິນຕ່ຳຢ່າງດີ, ແລະ ເຄື່ອງນຸ່ງ
ຫົ່ມທີ່ມີຄ່າທຸກຊະນິດ, ແລະ ຂ້າພະເຈົ້າໄດ້
ເຫັນຍິງໂສເພນີຈຳນວນຫລວງຫລາຍ.
8 ແລະ ທູດໄດ້ກ່າວກັບຂ້າພະເຈົ້າ, ມີ
ຄວາມວ່າ: ຈົ່ງເບິ່ງຄຳ, ແລະ ເງິນ, ແລະ ຜ້າ
ໄໝ, ແລະ ຜ້າສີແດງສົດ, ແລະ ຜ້າລິນິນຕ່ຳ
ຢ່າງດີ, ແລະ ເຄື່ອງນຸ່ງຫົ່ມທີ່ມີຄ່າ, ແລະ ຍິງ
ໂສເພນີ, ຄື [ກ]ຄວາມປາດຖະໜາຂອງສາດ
ສະໜາຈັກໃຫຍ່ ແລະ ໜ້າກຽດຊັງແຫ່ງນີ້.
9 ແລະ ເປັນການສັນລະເສີນຂອງໂລກ
ທີ່ພວກເຂົາໄດ້ [ກ]ທຳລາຍໄພ່ພົນຂອງພຣະ
ເຈົ້າ ແລະ ເອົາພວກເຂົາລົງໄປຫາການ
ເປັນຊະເລີຍ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ຫລຽວເບິ່ງ ແລະ ເຫັນຜືນນ້ຳ
ອັນກວ້າງໃຫຍ່; ແລະ ມັນໄດ້ແບ່ງແຍກຄົນ
ຕ່າງຊາດອອກຈາກລູກຫລານຂອງພວກ
ອ້າຍຂອງຂ້າພະເຈົ້າ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດ
ໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງເບິ່ງພຣະພິ
ໂລດຂອງພຣະເຈົ້າທີ່ມີຕໍ່ລູກຫລານຂອງ
ພວກອ້າຍຂອງເຈົ້າ.
12 ແລະ ຂ້າພະເຈົ້າໄດ້ຫລຽວເບິ່ງ ແລະ
ໄດ້ເຫັນຊາຍຜູ້ໜຶ່ງໃນບັນດາຄົນຕ່າງຊາດ
ຊຶ່ງຖືກແຍກອອກໄປຈາກລູກຫລານຂອງ
ພວກອ້າຍຂອງຂ້າພະເຈົ້າດ້ວຍຜືນນ້ຳ
ອັນກວ້າງໃຫຍ່; ແລະ ຂ້າພະເຈົ້າໄດ້ເຫັນ
[ກ]ພຣະວິນຍານຂອງພຣະເຈົ້າ ສະເດັດລົງ
ມາ ແລະ ກະທຳຕໍ່ຊາຍຜູ້ນັ້ນ, ແລ້ວເພິ່ນໄດ້
ອອກໄປໃນຜືນນ້ຳອັນກວ້າງໃຫຍ່ຈົນມາ
ເຖິງລູກຫລານຂອງພວກອ້າຍຂອງຂ້າພະ
ເຈົ້າ ຜູ້ຊຶ່ງຢູ່ໃນແຜ່ນດິນແຫ່ງຄຳສັນຍາ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນພຣະວິນຍານຂອງພຣະ
ເຈົ້າກະທຳຕໍ່ຄົນຕ່າງຊາດອື່ນໆ; ແລະ ຄົນ
ເຫລົ່ານັ້ນອອກໄປພົ້ນຈາກການເປັນຊະ
ເລີຍໃນຜືນນ້ຳອັນກວ້າງໃຫຍ່ນັ້ນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຂ້າພະເຈົ້າໄດ້ເຫັນຄົນຕ່າງຊາດ [ກ]ເປັນ
ຈຳນວນຫລວງຫລາຍຢູ່ໃນ [ຂ]ແຜ່ນດິນແຫ່ງ
ຄຳສັນຍາ; ແລະ ຂ້າພະເຈົ້າໄດ້ເຫັນພຣະ
ພິໂລດຂອງພຣະເຈົ້າມີຕໍ່ລູກຫລານຂອງ
ພວກອ້າຍຂອງຂ້າພະເຈົ້າ; ແລະ ພວກເຂົາ
ໄດ້ [ຄ]ກະຈັດກະຈາຍໄປຕໍ່ໜ້າຄົນຕ່າງຊາດ
ແລະ ຖືກລົງທັນ.
15 ແລະ ຂ້າພະເຈົ້າໄດ້ເຫັນພຣະວິນ
ຍານຂອງພຣະຜູ້ເປັນເຈົ້າສະຖິດຢູ່ກັບຄົນ
ຕ່າງຊາດ, ແລະ ພວກເຂົາໄດ້ຮຸ່ງເຮືອງຂຶ້ນ
ແລະ ໄດ້ຮັບ [ກ]ແຜ່ນດິນເປັນມູນມໍລະດົກ
ຂອງພວກເຂົາ; ແລະ ຂ້າພະເຈົ້າໄດ້ເຫັນ
ວ່າ ພວກເຂົາຂາວ ແລະ [ຂ]ຈົບງາມທີ່ສຸດ
ຄືກັນກັບຜູ້ຄົນຂອງຂ້າພະເຈົ້າກ່ອນພວກ
ເຂົາຖືກ [ຄ]ລົງທັນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເຫັນຄົນຕ່າງຊາດ ຊຶ່ງອອກ
ໄປຈາກການເປັນຊະເລີຍ ແລະ ຖ່ອມຕົວຕໍ່
ພຣະຜູ້ເປັນເຈົ້າ; ແລະ ລິດເດດຂອງພຣະຜູ້

6 *ຂ* 1 ນຟ 22:22–23.
7 *ກ* ມມ 8:36–38.
8 *ກ* ພນມ 18:10–24; ມມ 8:35–38.
9 *ກ* ພນມ 13:4–7.
12 *ກ* ຄມພ ດົນໃຈ, ການດົນໃຈ.
14 *ກ* 2 ນຟ 1:11; ມມ 5:19–20.
*ຂ* ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
*ຄ* 1 ນຟ 22:7–8. ຄມພ ອິດສະຣາເອນ— ການກະຈັດກະຈາຍຂອງ ຊາວອິດສະຣາເອນ.
15 *ກ* 2 ນຟ 10:19.
*ຂ* 2 ນຟ 5:21.
*ຄ* ມມ 6:17–22.

ເປັນເຈົ້າໄດ້ຢູ່ກັບ [ກ]ພວກເຂົາ.

17 ແລະ ຂ້າພະເຈົ້າໄດ້ເຫັນວ່າ ຄົນຕ່າງຊາດຈາກປະເທດເດີມຂອງພວກເຂົາໄດ້ເດີນທາງມາເຕົ້າໂຮມກັນໃນນ້ຳ ແລະ ໃນແຜ່ນດິນເພື່ອສູ້ຮົບກັບພວກເຂົາ.

18 ແລະ ຂ້າພະເຈົ້າໄດ້ເຫັນວ່າ ລິດເດດຂອງພຣະເຈົ້າ ໄດ້ຢູ່ກັບພວກເຂົາ ແລະ ພຣະພິໂລດຂອງພຣະເຈົ້າມີຕໍ່ທຸກຄົນທີ່ມາເຕົ້າໂຮມກັນເພື່ອສູ້ຮົບກັບພວກເຂົາ.

19 ແລະ ຂ້າພະເຈົ້ານີໄຟເຫັນວ່າຄົນຕ່າງຊາດທີ່ອອກຈາກການເປັນຊະເລີຍໄດ້ຮັບການ [ກ]ປົດປ່ອຍໂດຍລິດເດດຂອງພຣະເຈົ້າໃຫ້ພົ້ນຈາກກຳມືຂອງປະຊາຊາດອື່ນໆທັງສິ້ນ.

20 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້ານີໄຟໄດ້ເຫັນວ່າພວກເຂົາຮຸ່ງເຮືອງຢູ່ໃນແຜ່ນດິນນັ້ນ, ແລະ ຂ້າພະເຈົ້າໄດ້ເຫັນ [ກ]ໜັງສືເຫລັ້ມໜຶ່ງ ແລະ ມັນຖືກນຳອອກໄປໃນບັນດາພວກເຂົາ.

21 ແລະ ທູດໄດ້ຖາມຂ້າພະເຈົ້າວ່າ: ເຈົ້າຮູ້ຈັກຄວາມໝາຍຂອງໜັງສືເຫລັ້ມນັ້ນບໍ່?

22 ແລະ ຂ້າພະເຈົ້າຕອບເພິ່ນວ່າ: ຂ້ານ້ອຍບໍ່ຮູ້ຈັກເລີຍ.

23 ແລະ ພຣະອົງກ່າວວ່າ: ຈົ່ງເບິ່ງ ມັນອອກມາຈາກປາກຂອງຊາວຢິວ. ແລະ ຂ້າພະເຈົ້ານີໄຟໄດ້ເຫັນມັນ; ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າອີກວ່າ: [ກ]ໜັງສືເຫລັ້ມທີ່ເຈົ້າໄດ້ເຫັນຄື [ຂ]ບັນທຶກຂອງ [ຄ]ຊາວຢິວ ຊຶ່ງປະກອບດ້ວຍພັນທະສັນຍາຂອງພຣະຜູ້ເປັນເຈົ້າທີ່ກະທຳໄວ້ກັບເຊື້ອສາຍອິດສະຣາເອນ; ແລະ ມັນຍັງໄດ້ບັນຈຸຄຳທຳນາຍຫລາຍຢ່າງຂອງສາດສະດາຜູ້ບໍລິສຸດນຳອີກ; ແລະ ເປັນບັນທຶກຄືກັນກັບອັກຂະລະທີ່ຢູ່ໃນ [ງ]ແຜ່ນຈາລຶກທອງເຫລືອງ ຊຶ່ງມີຂຽນໄວ້ບໍ່ຫລາຍເທົ່າໃດ; ເຖິງຢ່າງໃດກໍຕາມ, ມັນຍັງປະກອບດ້ວຍພັນທະສັນຍາຂອງພຣະຜູ້ເປັນເຈົ້າທີ່ພຣະອົງໄດ້ກະທຳໄວ້ກັບເຊື້ອສາຍອິດສະຣາເອນ; ດັ່ງນັ້ນ, ມັນຈຶ່ງມີຄຸນຄ່າຢ່າງຫລວງຫລາຍສຳລັບຄົນຕ່າງຊາດ.

24 ແລະ ທູດຂອງພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ເຈົ້າເຫັນແລ້ວວ່າໜັງສືເຫລັ້ມນັ້ນໄດ້ອອກມາຈາກປາກຂອງຊາວຢິວ; ແລະ ເມື່ອມັນອອກມາຈາກປາກຂອງຊາວຢິວ, ມັນຈຶ່ງປະກອບດ້ວຍຄວາມສົມບູນຂອງພຣະກິດຕິຄຸນຂອງພຣະຜູ້ເປັນເຈົ້າ ຊຶ່ງອັກຄະສາວົກສິບສອງໄດ້ເປັນພະຍານໄວ້; ແລະ ພວກເພິ່ນໄດ້ເປັນພະຍານໄວ້ຕາມຄວາມຈິງ ຊຶ່ງມີຢູ່ໃນພຣະເມສານ້ອຍຂອງພຣະເຈົ້າ.

25 ດັ່ງນັ້ນ, ສິ່ງເຫລົ່ານີ້ຈຶ່ງອອກໄປດ້ວຍຄວາມບໍລິສຸດຈາກ [ກ]ຊາວຢິວໄປຫາ [ຂ]ຄົນຕ່າງຊາດຕາມຄວາມຈິງ ຊຶ່ງມີຢູ່ໃນພຣະເຈົ້າ.

26 ແລະ ຫລັງຈາກສິ່ງເຫລົ່ານີ້ອອກໄປຈາກມືຂອງອັກຄະສາວົກສິບສອງຂອງພຣະເມສານ້ອຍ ແລະ ຈາກຊາວຢິວ [ກ]ໄປຫາຄົນຕ່າງຊາດແລ້ວ, ເຈົ້າຈະເຫັນການຈັດຕັ້ງຂອງສາດສະໜາຈັກ [ຂ]ໃຫຍ່ ແລະ ໜ້າກຽດຊັງກວ່າ [ຄ]ສາດສະໜາຈັກອື່ນໃດ

16 *ກ* ຄພ 101:80.
19 *ກ* 2 ນຟ 10:10–14; 3 ນຟ 21:4; ອທ 2:12.
20 *ກ* 1 ນຟ 14:23.
23 *ກ* 1 ນຟ 13:38; 2 ນຟ 29:4–12.
*ຂ* ຄມພ ພຣະຄຳພີ.
*ຄ* 2 ນຟ 3:12.
*ງ* 1 ນຟ 5:10–13.
25 *ກ* 2 ນຟ 29:4–6; ຄພ 3:16. ຄມພ ຊາວຢິວ.
*ຂ* ຄມພ ຄົນຕ່າງຊາດ.
26 *ກ* ມທ 21:43.
*ຂ* 1 ນຟ 13:4–6; 14:3, 9–17.
*ຄ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ—ການປະຖິ້ມຄວາມເຊື່ອຂອງສາດສະໜາຈັກຄຣິດສະຕຽນລຸ້ນເດີມ.

ທັງ ສິ້ນ; ເພາະ ຈົ່ງ ເບິ່ງ, ເພາະ ພວກ ເຂົາ
[ງ]ເອົາຂໍ້ຄວາມຫລາຍຕອນຊຶ່ງ [ຈ]ແຈ່ມແຈ້ງ
ແລະ ມີຄ່າທີ່ສຸດໄປຈາກພຣະກິດຕິຄຸນ
ຂອງພຣະເມສານ້ອຍ ແລະ ເອົາພັນທະສັນ
ຍາຂອງພຣະຜູ້ເປັນເຈົ້າໄປນຳອີກ.

27 ແລະ ພວກເຂົາກະທຳສິ່ງທັງໝົດນີ້
ໄປ ເພື່ອພວກເຂົາຈະໄດ້ບິດເບືອນທາງ
ທີ່ຖືກຕ້ອງຂອງພຣະຜູ້ເປັນເຈົ້າ, ເພື່ອວ່າ
ພວກເຂົາຈະໄດ້ເຮັດໃຫ້ລູກຫລານມະນຸດ
ຕາບອດ ແລະ ມີໃຈແຂງກະດ້າງ.

28 ດັ່ງນັ້ນ, ເຈົ້າເຫັນວ່າຫລັງຈາກໜັງສື
ເຫລັ້ມນັ້ນອອກໄປໂດຍຜ່ານມືຂອງສາດ
ສະໜາຈັກໃຫຍ່ ແລະ ໜ້າກຽດຊັງແລ້ວ,
ມີຫລາຍຢ່າງທີ່ແຈ່ມແຈ້ງ ແລະ ມີຄ່າຖືກ
ເອົາໄປຈາກໜັງສື ຊຶ່ງເປັນໜັງສືຂອງພຣະ
ເມສານ້ອຍຂອງພຣະເຈົ້າ.

29 ແລະ ຫລັງຈາກສິ່ງທີ່ແຈ່ມແຈ້ງ ແລະ
ມີຄ່າຖືກເອົາອອກແລ້ວ, ມັນຈະອອກໄປ
ຫາທຸກປະຊາຊາດຂອງຄົນຕ່າງຊາດ; ແລະ
ຫລັງຈາກມັນອອກໄປຫາທຸກປະຊາຊາດ
ຂອງຄົນຕ່າງຊາດແລ້ວ, ແທ້ຈິງແລ້ວ, ມັນ
ໄດ້ຂ້າມຜືນນ້ຳອັນກວ້າງໃຫຍ່ທີ່ເຈົ້າເຫັນ
ໄປກັບຄົນຕ່າງຊາດ ຊຶ່ງອອກໄປຈາກການ
ເປັນຊະເລີຍແລ້ວ—ເພາະຫລາຍຢ່າງທີ່
ແຈ່ມແຈ້ງ ແລະ ມີຄ່າຖືກເອົາອອກຈາກ
ໜັງສື ຊຶ່ງເປັນທີ່ແຈ່ມແຈ້ງແກ່ຄວາມເຂົ້າ
ໃຈຂອງລູກຫລານມະນຸດ ຕາມຄວາມແຈ່ມ
ແຈ້ງຊຶ່ງມີຢູ່ໃນພຣະເມສານ້ອຍຂອງພຣະ
ເຈົ້າ—ເພາະສິ່ງເຫລົ່ານີ້ທີ່ຖືກເອົາອອກໄປ
ຈາກພຣະກິດຕິຄຸນຂອງພຣະເມສານ້ອຍ,
ຜູ້ຄົນຈຳນວນຫລວງຫລາຍຈຶ່ງມີການຜິດ
ພາດ, ແທ້ຈິງແລ້ວ, ເຖິງຂະໜາດທີ່ຊາຕານ
ມີອຳນາດເໜືອພວກເຂົາ.

30 ເຖິງຢ່າງໃດກໍຕາມ, ເຈົ້າຍັງເຫັນວ່າ
ຄົນຕ່າງຊາດຜູ້ທີ່ອອກໄປຈາກການເປັນ
ຊະເລີຍນັ້ນຖືກຍົກຂຶ້ນໂດຍອຳນາດຂອງ
ພຣະເຈົ້າເໜືອປະຊາຊາດອື່ນໃດທັງສິ້ນ,
ໃນແຜ່ນດິນທີ່ປະເສີດເລີດລ້ຳກວ່າແຜ່ນ
ດິນອື່ນໃດທັງສິ້ນ, ອັນເປັນແຜ່ນດິນຊຶ່ງອົງ
ພຣະຜູ້ເປັນເຈົ້າໃຫ້ພັນທະສັນຍາກັບບິດາ
ຂອງເຈົ້າວ່າ ລູກຫລານຂອງເຈົ້າຈະໄດ້ຮັບ
[ກ]ແຜ່ນດິນຊຶ່ງເປັນມູນມໍລະດົກຂອງພວກ
ເຂົາ; ດັ່ງນັ້ນ, ເຈົ້າຈຶ່ງເຫັນວ່າ ອົງພຣະຜູ້
ເປັນເຈົ້າຈະບໍ່ຍອມໃຫ້ຄົນຕ່າງຊາດທຳ
ລາຍລູກຫລານຂອງເຈົ້າ ຊຶ່ງເປັນຊາດ
[ຂ]ປະສົມໃນບັນດາລູກຫລານຂອງພວກ
ອ້າຍຂອງເຈົ້າ.

31 ກັບທັງພຣະອົງຈະບໍ່ຍອມໃຫ້ຄົນຕ່າງ
ຊາດ [ກ]ທຳລາຍລູກຫລານຂອງພວກອ້າຍ
ຂອງເຈົ້າ.

32 ທັງອົງພຣະຜູ້ເປັນເຈົ້າຈະບໍ່ຍອມໃຫ້
ຄົນຕ່າງຊາດຄົງຢູ່ໃນສະພາບຕາບອດອັນ
ເປັນຕາຢ້ານຕະຫລອດໄປ ຊຶ່ງເຈົ້າໄດ້ເຫັນ
ຄວາມເປັນຢູ່ຂອງພວກເຂົາ ເພາະຂໍ້ຄວາມ
ທີ່ແຈ່ມແຈ້ງ ແລະ ມີຄ່າທີ່ສຸດຂອງພຣະກິດ
ຕິຄຸນຂອງພຣະເມສານ້ອຍຖືກກັກໄວ້ໂດຍ
ສາດສະໜາຈັກທີ່ [ກ]ໜ້າກຽດຊັງ ຊຶ່ງຈັດຕັ້ງ
ຂອງມັນເຈົ້າກໍເຫັນຢູ່ແລ້ວ.

33 ດັ່ງນັ້ນ ພຣະ ເມສານ້ອຍ ຂອງພຣະ
ເຈົ້າຈຶ່ງໄດ້ກ່າວວ່າ: ເຮົາຈະມີຄວາມເມດ
ຕາຕໍ່ຄົນຕ່າງຊາດຈົນເຖິງວ່າໄປຢ້ຽມຢາມ
ຜູ້ທີ່ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນ

26 *ງ* ມມ 8:33;
ມຊ 1:41.
*ຈ* 1 ນຟ 14:20–26;
ຫຼຊ 1:8.
30 *ກ* ຄມພ ແຜ່ນດິນ
ແຫ່ງຄຳສັນຍາ.
*ຂ* ແອວ 45:10–14.
31 *ກ* 2 ນຟ 4:7; 10:18–19;
ຢຄ 3:5–9;
ຣລມ 15:12;
3 ນຟ 16:8–9;
ມມ 5:20–21.
32 *ກ* ຄມພ ມານ—ສາດສະ
ໜາຈັກຂອງມານ.

ໃນການພິພາກສາອັນຍິ່ງໃຫຍ່.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື
ທູດຂອງພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າ, ມີຄວາມວ່າ: ຈົ່ງເບິ່ງພຣະເມສາ
ນ້ອຍຂອງພຣະເຈົ້າໄດ້ກ່າວໄວ້ວ່າ, ຫລັງ
ຈາກເຮົາໄປຢ້ຽມຢາມ [ກ]ຜູ້ທີ່ເຫລືອຢູ່ຂອງ
ເຊື້ອສາຍອິດສະຣາເອນແລ້ວ—ແລະ ຜູ້ທີ່
ເຫລືອຢູ່ທີ່ເຮົາເວົ້າເຖິງນີ້ຄືລູກຫລານຂອງ
ບິດາຂອງເຈົ້າ—ດັ່ງນັ້ນ, ຫລັງຈາກທີ່ເຮົາ
ໄປຢ້ຽມຢາມພວກເຂົາໃນການພິພາກສາ
ແລະ ລົງທັນພວກເຂົາດ້ວຍມືຂອງຄົນຕ່າງ
ຊາດແລ້ວ, ແລະ ຫລັງຈາກຄົນຕ່າງຊາດ
ເຮັດການ [ຂ]ຜິດພາດໄປຢ່າງຫລວງຫລາຍ
ແລ້ວ, ເພາະຂໍ້ຄວາມທີ່ແຈ່ມແຈ້ງ ແລະ ມີ
ຄ່າທີ່ສຸດຂອງ [ຄ]ພຣະກິດຕິຄຸນຂອງພຣະ
ເມສານ້ອຍຖືກກັກໄວ້ໂດຍສາດສະໜາຈັກ
ອັນໜ້າກຽດຊັງນັ້ນ ຊຶ່ງເປັນຜູ້ໃຫ້ກຳເນີດ
ຍິງໂສເພນີ, ພຣະເມສານ້ອຍໄດ້ກ່າວວ່າ—
ເຮົາຈະມີຄວາມເມດຕາຕໍ່ຄົນຕ່າງຊາດໃນ
ມື້ນັ້ນດ້ວຍອຳນາດຂອງເຮົາເຖິງຂະໜາດ
ທີ່ເຮົາຈະ [ງ]ນຳເອົາສ່ວນຫລາຍຂອງພຣະ
ກິດຕິຄຸນຂອງເຮົາທີ່ແຈ່ມແຈ້ງ ແລະ ມີຄ່າ
ມາໃຫ້ພວກເຂົາ, ພຣະເມສານ້ອຍໄດ້ກ່າວ.
35 ເພາະຈົ່ງເບິ່ງ, ພຣະເມສານ້ອຍໄດ້
ກ່າວວ່າ: ເຮົາຈະສະແດງຕົນໃຫ້ປະຈັກແກ່
ລູກຫລານຂອງເຈົ້າ, ເພື່ອພວກເຂົາຈະໄດ້
ຂຽນຂໍ້ຄວາມຫລາຍຢ່າງ ຊຶ່ງເຮົາຈະສິດ
ສອນໃຫ້ແກ່ພວກເຂົາ ຊຶ່ງຈະແຈ່ມແຈ້ງ
ແລະ ມີຄ່າ; ແລະ ຫລັງຈາກນັ້ນລູກຫລານ
ຂອງເຈົ້າຈະຖືກທຳລາຍ ແລະ ເສື່ອມໂຊມ
ຢູ່ໃນຄວາມບໍ່ເຊື່ອຖື, ແລະ ລູກຫລານຂອງ
ພວກອ້າຍຂອງເຈົ້າກໍເໝືອນກັນ, ຈົ່ງເບິ່ງ,
[ກ]ຂໍ້ຄວາມເຫລົ່ານີ້ຈະຖືກເຊື່ອງໄວ້ເພື່ອຈະ
ໄດ້ເອົາອອກມາຫາຄົນຕ່າງຊາດໂດຍຂອງ
ປະທານ ແລະ ອຳນາດຂອງພຣະເມສາ
ນ້ອຍ.
36 ແລະ ໃນນັ້ນຈະບັນທຶກ [ກ]ພຣະກິດຕິ
ຄຸນຂອງເຮົາ, ແລະ [ຂ]ຫີນຂອງເຮົາ, ແລະ
ຄວາມລອດຂອງເຮົາ, ພຣະເມສານ້ອຍໄດ້
ກ່າວ.
37 ແລະ ຄົນທີ່ພະຍາຍາມນຳ [ກ]ຊີໂອນ
ຂອງເຮົາມາໃນມື້ນັ້ນຈະ [ຂ]ເປັນສຸກ, ເພາະ
ພວກເຂົາຈະມີ [ຄ]ຂອງປະທານ ແລະ
ອຳນາດແຫ່ງພຣະວິນຍານບໍລິສຸດ; ແລະ
ຖ້າຫາກພວກເຂົາ [ງ]ອົດທົນຈົນເຖິງທີ່ສຸດ
ພວກເຂົາຈະຖືກຍົກຂຶ້ນໃນວັນສຸດທ້າຍ,
ແລະ ຈະລອດໃນ [ຈ]ອານາຈັກອັນເປັນນິດ
ຂອງພຣະເມສານ້ອຍ; ແລະ ຜູ້ໃດກໍຕາມທີ່
[ສ]ປະກາດສັນຕິສຸກ, ແທ້ຈິງແລ້ວ, ຂ່າວແຫ່ງ
ຄວາມປິຕິຍິນດີອັນຍິ່ງໃຫຍ່, ພວກເຂົາກໍ
ຈະມີຄວາມສວຍງາມພຽງໃດຢູ່ເທິງພູ.
38 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນຜູ້ທີ່ເຫລືອຢູ່ຂອງລູກຫລານ
ຂອງພວກອ້າຍຂອງຂ້າພະເຈົ້າ, ແລະ ເຫັນ
[ກ]ໜັງສືຂອງພຣະເມສານ້ອຍຂອງພຣະເຈົ້າ
ນຳອີກ ຊຶ່ງອອກມາຈາກປາກຂອງຊາວ

34 ກ ຄມພ ໂຢເຊັບ, ລູກຊາຍຂອງຢາໂຄບ.
ຂ 1 ນຟ 14:1–3; 2 ນຟ 26:20.
ຄ ຄມພ ພຣະກິດຕິຄຸນ.
ງ ຄພ 10:62. ຄມພ ການຟື້ນຟູພຣະກິດຕິຄຸນ.
35 ກ 2 ນຟ 27:6; 29:1–2. ຄມພ ພຣະຄຳພີມໍມອນ.
36 ກ 3 ນຟ 27:13–21.
ຂ ຮລມ 5:12; 3 ນຟ 11:38–39. ຄມພ ຫີນ.
37 ກ ຄມພ ຊີໂອນ.
ຂ ຄພ 21:9.
ຄ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
ງ 3 ນຟ 27:16. ຄມພ ອົດທົນ, ຄວາມອົດທົນ.
ຈ ຄມພ ລັດສະໝີພາບຂອງຊັ້ນສູງ.
ສ ອຊຢ 52:7; ມຊຢ 15:14–18; 3 ນຟ 20:40.
38 ກ 1 ນຟ 13:23; 2 ນຟ 29:4–6.

ຢິວ ອອກມາຈາກຄົນຕ່າງຊາດ [ຂ]ໄປຫາຜູ້
ທີ່ເຫລືອຢູ່ຂອງລູກຫລານຂອງພວກອ້າຍ
ຂອງຂ້າພະເຈົ້າ.
39 ຫລັງຈາກມັນມາຫາພວກເຂົາແລ້ວ
ຂ້າພະເຈົ້າໄດ້ເຫັນ [ກ]ໜັງສືເຫລັ້ມອື່ນ ຊຶ່ງ
ອອກ ມາ ໂດຍ ອຳນາດ ຂອງ ພຣະ ເມສາ
ນ້ອຍຈາກຄົນຕ່າງຊາດໄປຫາພວກເຂົາ
ເພື່ອໃຫ້ຄົນຕ່າງຊາດ ແລະ ຜູ້ທີ່ເຫລືອຢູ່
ຂອງລູກຫລານຂອງພວກອ້າຍຂອງຂ້າພະ
ເຈົ້າ, ແລະ ພ້ອມທັງຊາວຢິວທີ່ກະຈັດກະ
ຈາຍໄປທົ່ວພື້ນແຜ່ນດິນໂລກ [ຂ]ຍອມຮັບ
ວ່າ ບັນທຶກຂອງສາດສະດາ ແລະ ຂອງ
ອັກຄະສາວົກສິບສອງຂອງພຣະເມສາ
ນ້ອຍເປັນ [ຄ]ຄວາມຈິງ.
40 ແລະ ທູດໄດ້ກ່າວກັບຂ້າພະເຈົ້າ, ມີ
ຄວາມວ່າ [ກ]: ບັນທຶກສະບັບຫລັງ ຊຶ່ງເຈົ້າ
ເຫັນຢູ່ໃນບັນດາຄົນຕ່າງຊາດນັ້ນ ຈະ
[ຂ]ສະຖາປະນາຄວາມຈິງຂອງ [ຄ]ສະບັບທຳ
ອິດ ຊຶ່ງເປັນຂອງອັກຄະສາວົກສິບສອງ
ຂອງພຣະເມສານ້ອຍ ແລະ ຈະເຮັດໃຫ້ຮູ້
ສິ່ງທີ່ແຈ່ມແຈ້ງ ແລະ ມີຄ່າ ຊຶ່ງຖືກເອົາໄປ
ຈາກໜັງສືເຫລົ່ານີ້, ແລະ ຈະເຮັດໃຫ້ຮູ້ກັນ
ໃນທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນ
ທັງປວງ, ວ່າພຣະເມສານ້ອຍຂອງພຣະ
ເຈົ້າຄືພຣະບຸດຂອງພຣະບິດາຜູ້ສະຖິດນິ
ລັນດອນ, ແລະ [ງ]ພຣະຜູ້ຊ່ວຍໃຫ້ລອດຂອງ
ໂລກ, ແລະ ວ່າຄົນທັງປວງຕ້ອງມາຫາ
ພຣະອົງຖ້າບໍ່ດັ່ງນັ້ນເຂົາຈະລອດບໍ່ໄດ້.
41 ແລະ ເຂົາຕ້ອງມາຕາມຄຳຊຶ່ງຈະ
ສະຖາປະນາຂຶ້ນໂດຍພຣະໂອດຂອງ
ພຣະເມສານ້ອຍ ແລະ ພຣະຄຳຂອງພຣະ
ເມສານ້ອຍຈະເປັນທີ່ຮູ້ຈັກ ໃນບັນທຶກຂອງ
ລູກຫລານຂອງເຈົ້າເຊັ່ນດຽວກັບໃນບັນ
ທຶກຂອງອັກຄະສາວົກສິບສອງຂອງພຣະ
ເມສານ້ອຍ; ດັ່ງນັ້ນບັນທຶກທັງສອງເຫລັ້ມ
ນີ້ຈະຖືກສະຖາປະນາໄວ້ເປັນ [ກ]ເຫລັ້ມ
ດຽວ; ເພາະມີ [ຂ]ພຣະເຈົ້າອົງດຽວ ແລະ ມີ
ຜູ້ລ້ຽງ [ຄ]ຜູ້ດຽວທົ່ວພື້ນແຜ່ນດິນໂລກ.
42 ແລະ ເມື່ອເວລາມາເຖິງ ພຣະອົງຈະ
ສະແດງພຣະອົງເອງໃຫ້ປະຈັກແກ່ທຸກປະ
ຊາຊາດ, ທັງ [ກ]ຊາວຢິວ ແລະ ຄົນຕ່າງຊາດ
ນຳອີກ; ແລະ ຫລັງຈາກທີ່ພຣະອົງສະແດງ
ພຣະອົງເອງໃຫ້ປະຈັກແກ່ຊາວຢິວ ແລະ
ຕໍ່ຄົນຕ່າງຊາດແລ້ວ, ເມື່ອນັ້ນພຣະອົງຈະ
ສະແດງພຣະອົງເອງໃຫ້ປະຈັກແກ່ຄົນຕ່າງ
ຊາດ ແລະ ຕໍ່ຊາວຢິວນຳອີກ, ແລະ ຜູ້ [ຂ]ສຸດ
ທ້າຍຈະເປັນຜູ້ທຳອິດ ແລະ ຜູ້ [ຄ]ທຳອິດຈະ
ເປັນຜູ້ສຸດທ້າຍ.

## ບົດທີ 14

*ທູດບອກນີໄຟເຖິງພອນ ແລະ ການສາບແຊ່ງຊຶ່ງຕົກມາຫາຄົນຕ່າງຊາດ—ມີສາດສະໜາຈັກສອງແຫ່ງເທົ່ານັ້ນຄື: ສາດສະໜາຈັກຂອງພຣະເມສານ້ອຍຂອງພຣະເຈົ້າ ແລະ ສາດສະໜາຈັກຂອງມານ—ໄພ່ພົນຂອງພຣະເຈົ້າໃນທຸກປະຊາຊາດຖືກຂົ່ມເຫັງໂດຍສາດສະໜາຈັກໃຫຍ່ ແລະ*

38 *ຂ* ມມ 5:15.
39 *ກ* ຄມພ ພຣະຄຳພີ—ພຣະຄຳພີທີ່ໄດ້ທຳນາຍໄວ້ຈະອອກມາ.
*ຂ* ອຊກ 37:15–20; 2 ນຟ 3:11–12.
*ຄ* 1 ນຟ 14:30.
40 *ກ* 2 ນຟ 26:16–17; 29:12. ຄມພ ພຣະຄຳພີມໍມອນ.
*ຂ* ມມ 7:8–9.
*ຄ* ຄມພ ພຣະຄຣິສຕະທຳຄຳພີ.
*ງ* ເບິ່ງ ໜ້າວິເຄາະສະບັບຂອງພຣະຄຳພີມໍມອນ. ມຊ 1:6.
41 *ກ* ອຊກ 37:17.
*ຂ* ພບຍ 6:4; ຢຮ 17:21–23; 2 ນຟ 31:21.
*ຄ* ຄມພ ຜູ້ລ້ຽງທີ່ດີ.
42 *ກ* ຄພ 90:8–9; 107:33; 112:4.
*ຂ* ຢຄ 5:63.
*ຄ* ລກ 13:30; 1 ນຟ 15:13–20.

*ໜ້າກຽດຊັງ—ອັກຄະສາວົກໂຢຮັນຈະຂຽນ
ກ່ຽວກັບຄາວສິ້ນສຸດໂລກ. ປະມານ 600–
592 ປີ ກ່ອນ ຄ.ສ.*

1 ແລະ ເຫດການຈະບັງເກີດຂຶ້ນຄື, ຖ້າ
ຫາກ [ກ]ຄົນຕ່າງຊາດຈະເຊື່ອຟັງພຣະເມສາ
ນ້ອຍຂອງພຣະເຈົ້າໃນມື້ນັ້ນ ເວລາທີ່ພຣະ
ອົງສະແດງພຣະອົງເອງໃຫ້ປະຈັກແກ່ພວກ
ເຂົາດ້ວຍພຣະຄຳ ແລະ ດ້ວຍ [ຂ]ອຳນາດ
ໂດຍການກະທຳແທ້ຈິງອັນເປັນການເອົາ
ສິ່ງທີ່ເຮັດໃຫ້ພວກເຂົາ [ຄ]ສະດຸດໄປ—
2 ແລະ ບໍ່ເຮັດໃຈແຂງກະດ້າງຕໍ່ພຣະ
ເມສານ້ອຍຂອງພຣະເຈົ້າແລ້ວ, ພວກເຂົາ
ຈະຖືກນັບເຂົ້າຢູ່ໃນບັນດາລູກຫລານຂອງ
ບິດາຂອງເຈົ້າ; ແທ້ຈິງແລ້ວ, ພວກເຂົາ
ຈະຖືກ [ກ]ນັບເຂົ້າຢູ່ໃນບັນດາເຊື້ອສາຍ
ອິດສະຣາເອນ; ແລະ ພວກເຂົາຈະເປັນຜູ້
[ຂ]ໄດ້ຮັບພອນໃນແຜ່ນດິນແຫ່ງຄຳສັນຍາ
ຕະຫລອດໄປ; ພວກເຂົາຈະບໍ່ຖືກນຳໄປ
ຫາການເປັນຊະເລີຍອີກຕໍ່ໄປ; ແລະ ເຊື້ອ
ສາຍອິດສະຣາເອນກໍຈະບໍ່ສັບສົນອີກຕໍ່
ໄປ.
3 ແລະ [ກ]ຫລຸມໃຫຍ່ນັ້ນ ຊຶ່ງຖືກຂຸດໄວ້ໃຫ້
ພວກເຂົາໂດຍສາດສະໜາຈັກໃຫຍ່ ແລະ
ໜ້າກຽດຊັງ ຊຶ່ງຕັ້ງຂຶ້ນໂດຍມານ ແລະ ລູກ
ຫລານຂອງມັນ, ເພື່ອຈະໄດ້ພາຈິດວິນ
ຍານມະນຸດລົງໄປສູ່ນະລົກ—ແທ້ຈິງແລ້ວ,
ຫລຸມໃຫຍ່ນັ້ນ ຊຶ່ງຖືກຂຸດໄວ້ເພື່ອຄວາມ
ພິນາດຂອງມະນຸດຈະເຕັມໄປດ້ວຍຜູ້ທີ່
ຂຸດມັນໄວ້ຈົນເຖິງຄວາມພິນາດສິ້ນຂອງ
ພວກເຂົາ, ພຣະເມສານ້ອຍຂອງພຣະເຈົ້າ
ໄດ້ກ່າວ; ບໍ່ແມ່ນຄວາມພິນາດຂອງຈິດວິນ
ຍານນອກຈາກເປັນການໂຍນມັນລົງໄປ
ໃນ [ຂ]ນະລົກອັນບໍ່ມີທີ່ສິ້ນສຸດ.
4 ເພາະ ຈົ່ງ ເບິ່ງ, ນີ້ເປັນໄປຕາມການ
ທີ່ຕົກເປັນຊະເລີຍຂອງມານ ແລະ ຕາມ
ຄວາມຍຸດຕິທຳຂອງພຣະເຈົ້າ ຊຶ່ງມີຕໍ່ທຸກ
ຄົນທີ່ສ້າງຄວາມຊົ່ວຮ້າຍ ແລະ ຄວາມໜ້າ
ກຽດຊັງຕໍ່ພຣະພັກຂອງພຣະອົງ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດ
ໄດ້ກ່າວກັບຂ້າພະເຈົ້ານີໄຟມີຄວາມວ່າ:
ເຈົ້າເຫັນແລ້ວວ່າ ຖ້າຫາກຄົນຕ່າງຊາດກັບ
ໃຈມັນຈະດີກັບເຂົາ; ແລ້ວເຈົ້າຮູ້ກ່ຽວກັບ
ພັນທະສັນຍາຂອງພຣະຜູ້ເປັນເຈົ້າທີ່ມີກັບ
ເຊື້ອສາຍອິດສະຣາເອນນຳອີກ; ແລະ ເຈົ້າ
ໄດ້ຍິນມາອີກວ່າ ຖ້າຫາກຜູ້ໃດບໍ່ [ກ]ກັບໃຈຜູ້
ນັ້ນຈະຕ້ອງຕາຍ.
6 ສະນັ້ນ, [ກ]ວິບັດແກ່ຄົນຕ່າງຊາດຖ້າ
ຫາກພວກເຂົາເຮັດໃຈແຂງກະດ້າງຕໍ່ພຣະ
ເມສານ້ອຍຂອງພຣະເຈົ້າ.
7 ພຣະ ເມສານ້ອຍ ຂອງ ພຣະ ເຈົ້າ ໄດ້
ກ່າວວ່າ ເມື່ອເວລາມາເຖິງເຮົາຈະກະທຳ
[ກ]ການຍິ່ງໃຫຍ່ ແລະ ໜ້າອັດສະຈັນໃນ
ບັນດາລູກຫລານມະນຸດ; ວຽກງານຊຶ່ງຈະ
ຢູ່ເປັນນິດ, ບໍ່ແມ່ນທາງໃດກໍທາງໜຶ່ງ—
ເພື່ອໃຫ້ເຂົາຍອມຮັບໄປຫາສັນຕິສຸກ ແລະ
[ຂ]ຊີວິດນິລັນດອນ ຫລື ປ່ອຍໃຫ້ເຂົາໄປສູ່
ຄວາມແຂງກະດ້າງຂອງໃຈຂອງພວກເຂົາ;

**14** 1 *ກ* 3 ນຟ 16:6–13.
ຄມພ ຄົນຕ່າງຊາດ.
*ຂ* 1 ທສນ 1:5;
1 ນຟ 14:14; ຢຄ 6:2–3.
*ຄ* ອຊຢ 57:14;
1 ນຟ 13:29, 34;
2 ນຟ 26:20.
2 *ກ* ຄລຕ 3:7, 29;
2 ນຟ 10:18–19;
3 ນຟ 16:13; 21:6, 22;
ອຣຣ 2:9–11.
*ຂ* 2 ນຟ 6:12; 10:8–14;
3 ນຟ 16:6–7; 20:27.
3 *ກ* 1 ນຟ 22:14;
ຄພ 109:25.
*ຂ* ຄມພ ນະລົກ;
ອັບປະໂຫຍດ, ຄວາມ
ອັບປະໂຫຍດ.
5 *ກ* ຄມພ ກັບໃຈ, ການກັບໃຈ.
6 *ກ* 2 ນຟ 28:32.
7 *ກ* ອຊຢ 29:14;
1 ນຟ 22:8;
2 ນຟ 27:26; 29:1–2;
ຄພ 4:1.
ຄມພ ການຟື້ນຟູ
ພຣະກິດຕິຄຸນ.
*ຂ* ຄມພ ຊີວິດນິລັນດອນ.

ແລະ ຄວາມ ມືດ ດັບ ແຫ່ງ ຈິດ ໃຈ ອັນ ນຳ
ພວກເຂົາລົງໄປສູ່ການເປັນຊະເລີຍ ແລະ
ໄປສູ່ຄວາມພິນາດ ນຳ ອີກ, ທັງ ທາງ ໂລກ
ແລະ ທາງ ວິນ ຍານ ຕາມ [ຄ]ການ ເປັນ ຊະ
ເລີຍຂອງມານ ຊຶ່ງເຮົາໄດ້ກ່າວມານັ້ນ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ທູດເວົ້າຂໍ້ຄວາມນີ້ແລ້ວ, ພຣະອົງໄດ້ຖາມ
ຂ້າພະເຈົ້າອີກວ່າ: ເຈົ້າຈື່ [ກ]ພັນທະສັນຍາ
ຂອງພຣະບິດາທີ່ມີໄວ້ກັບເຊື້ອສາຍອິດສະ
ຣາເອນໄດ້ບໍ? ຂ້າພະເຈົ້າຕອບພຣະອົງວ່າ,
ຂ້ານ້ອຍຈື່ໄດ້.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ອົງ ໄດ້ ກ່າວ ກັບ ຂ້າພະ ເຈົ້າວ່າ: ເບິ່ງ ເຖີດ,
ແລະ ຈົ່ງ ເບິ່ງ ສາດ ສະ ໜາ ຈັກ ໃຫຍ່ ແລະ
ໜ້າກຽດຊັງນັ້ນ ຊຶ່ງເປັນທີ່ໃຫ້ກຳເນີດຂອງ
ຄວາມ ໜ້າ ກຽດ ຊັງ ຊຶ່ງ [ກ]ມານ ເປັນ ຜູ້ຕັ້ງ
ຂອງມັນ.
10 ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າ
ວ່າ: ຈົ່ງເບິ່ງ ມີພຽງສາດສະໜາຈັກ [ກ]ສອງ
ແຫ່ງ ເທົ່ານັ້ນ; ແຫ່ງ ໜຶ່ງ ເປັນ ສາດ ສະ ໜາ
ຈັກ ຂອງ ພຣະ ເມສານ້ອຍ ຂອງ ພຣະ ເຈົ້າ
ແລະ ອີກ [ຂ]ແຫ່ງໜຶ່ງ ເປັນ ສາດ ສະໜາຈັກ
ຂອງມານ; ດັ່ງນັ້ນ, ຜູ້ໃດທີ່ບໍ່ເປັນຂອງສາດ
ສະໜາຈັກຂອງພຣະເມສານ້ອຍຂອງພຣະ
ເຈົ້າກໍຕ້ອງເປັນຂອງສາດສະໜາຈັກໃຫຍ່
ຊຶ່ງເປັນທີ່ໃຫ້ກຳເນີດຄວາມໜ້າກຽດຊັງ,
ແລະ ມັນຄື [ຄ]ໂສເພນີຂອງແຜ່ນດິນໂລກທັງ
ໝົດ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ຫລຽວເບິ່ງ ແລະ ໄດ້ເຫັນຍິງໂສ
ເພນີຂອງແຜ່ນດິນໂລກທັງໝົດ, ແລະ ນາງ
ນັ່ງຢູ່ ເທິງ [ກ]ຜືນ ນ້ຳ ອັນກວ້າງ ໃຫຍ່, ແລະ
[ຂ]ນາງຄອບຄອງທົ່ວຜືນ ແຜ່ນດິນ ໂລກທັງ
ໝົດໃນບັນດາທຸກປະຊາຊາດ, ທຸກຕະກຸນ,
ທຸກພາສາ, ແລະ ທຸກຜູ້ຄົນທັງປວງ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນສາດສະໜາຈັກຂອງພຣະ
ເມສານ້ອຍຂອງພຣະເຈົ້າ, ແລະ ມີສະມາ
ຊິກພຽງ [ກ]ເລັກໜ້ອຍເທົ່ານັ້ນ ເພາະຄວາມ
ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງໂສ
ເພນີ ຜູ້ທີ່ນັ່ງຢູ່ເທິງຜືນນ້ຳອັນກວ້າງໃຫຍ່
ນັ້ນ; ເຖິງຢ່າງ ໃດກໍຕາມ, ຂ້າພະ ເຈົ້າຍັງ
ເຫັນວ່າ ສາດສະໜາຈັກຂອງພຣະເມສາ
ນ້ອຍຜູ້ເປັນໄພ່ພົນຂອງພຣະເຈົ້າມີຢູ່ [ຂ]ທົ່ວ
ໄປຕາມຜືນແຜ່ນດິນໂລກເໝືອນກັນ; ແລະ
ການຄອບຄອງຂອງພວກເຂົາໃນຜືນແຜ່ນ
ດິນ ໂລກມີພຽງເລັກໜ້ອຍ ເທົ່ານັ້ນ ເພາະ
ຄວາມຊົ່ວຮ້າຍຂອງໂສເພນີໃຫຍ່ ຊຶ່ງຂ້າ
ພະເຈົ້າໄດ້ເຫັນນັ້ນ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະ ເຈົ້າ ເຫັນ ວ່າຜູ້ ໃຫ້ກຳ ເນີດ ຄວາມໜ້າ
ກຽດຊັງໄດ້ເຕົ້າໂຮມຝູງຊົນໃນຜືນແຜ່ນດິນ
ໂລກທັງໝົດໃນບັນດາທຸກປະຊາຊາດຂອງ
ຄົນ ຕ່າງໆຊາດ ເພື່ອ [ກ]ຕໍ່ສູ້ກັບ ພຣະ ເມສາ
ນ້ອຍຂອງພຣະເຈົ້າ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະ ເຈົ້າ ນີ ໄຟ ໄດ້ ເຫັນອຳນາດ ຂອງ ພຣະ
ເມສານ້ອຍຂອງພຣະເຈົ້າລົງມາເທິງໄພ່
ພົນຂອງສາດສະໜາຈັກຂອງພຣະເມສາ
ນ້ອຍ ແລະ ຜູ້ ຄົນ ແຫ່ງ ພັນທະ ສັນ ຍາ

---

7 *ຄ* 2 ນຟ 2:26–29;
ແອວ 12:9–11.
8 *ກ* ຄມພ ພັນທະສັນຍາ
ຂອງອັບຣາຮາມ.
9 *ກ* 1 ນຟ 15:35;
ຄພ 1:35.
ຄມພ ມານ.
10 *ກ* 1 ນຟ 22:23.
*ຂ* 1 ນຟ 13:4–6, 26.
*ຄ* ພນມ 17:5, 15;
2 ນຟ 10:16.
11 *ກ* ຢມຢ 51:13;
ພນມ 17:15.
*ຂ* ຄພ 35:11.
12 *ກ* ມທ 7:14;
3 ນຟ 14:14;
ຄພ 138:26.
*ຂ* ຄພ 90:11.
13 *ກ* ພນມ 17:1–6; 18:24;
1 ນຟ 13:5;
ຄພ 123:7–8.

ຂອງພຣະຜູ້ເປັນເຈົ້າ ຊຶ່ງກະຈັດກະຈາຍໄປຕາມພື້ນແຜ່ນດິນໂລກ; ແລະ ພວກເຂົາມີອາວຸດຄືຄວາມຊອບທຳ ພ້ອມກັບ [ກ]ອຳນາດຂອງພຣະເຈົ້າໃນລັດສະໝີພາບອັນຍິ່ງໃຫຍ່.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ເຫັນພຣະພິໂລດຂອງພຣະເຈົ້າ [ກ]ເທລົງໃສ່ສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງ, ເຖິງຂະໜາດທີ່ມີສົງຄາມ ແລະ ຂ່າວລືເລື່ອງສົງຄາມໃນບັນດາທຸກ [ຂ]ປະຊາຊາດ ແລະ ທຸກຕະກຸນຂອງແຜ່ນດິນໂລກ.

16 ແລະ ຂະນະທີ່ເລີ່ມມີ [ກ]ສົງຄາມ ແລະ ຂ່າວລືເລື່ອງສົງຄາມຢູ່ໃນບັນດາປະຊາຊາດທັງປວງທີ່ເປັນຂອງຜູ້ໃຫ້ກຳເນີດຄວາມໜ້າກຽດຊັງນັ້ນ, ທູດໄດ້ກ່າວກັບຂ້າພະເຈົ້າ, ມີຄວາມວ່າ: ຈົ່ງເບິ່ງ, ພຣະພິໂລດຂອງພຣະເຈົ້າມີຕໍ່ຜູ້ໃຫ້ກຳເນີດຍິງໂສເພນີ; ແລະ ຈົ່ງເບິ່ງ, ເຈົ້າໄດ້ເຫັນສິ່ງເຫລົ່ານີ້ທັງໝົດ—

17 ແລະ ເມື່ອ [ກ]ເວລານັ້ນມາເຖິງ [ຂ]ພຣະພິໂລດຂອງພຣະເຈົ້າຈະຖອກເທລົງໃສ່ຜູ້ໃຫ້ກຳເນີດຍິງໂສເພນີ ຊຶ່ງເປັນສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງຂອງແຜ່ນດິນໂລກທັງໝົດ ຊຶ່ງພື້ນຖານຂອງມັນຄືມານ, ແລ້ວໃນມື້ນັ້ນ [ຄ]ວຽກງານຂອງພຣະບິດາຈະເລີ່ມຕົ້ນໃນການຕຽມທາງເພື່ອໃຫ້ [ງ]ພັນທະສັນຍາຂອງພຣະອົງ ຊຶ່ງກະທຳໄວ້ກັບຜູ້ຄົນຂອງພຣະອົງທີ່ເປັນເຊື້ອສາຍອິດສະຣາເອນສຳເລັດຄົບຖ້ວນ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ທູດໄດ້ກ່າວກັບຂ້າພະເຈົ້າ, ມີຄວາມວ່າ: ເບິ່ງເຖີດ!

19 ແລະ ຂ້າພະເຈົ້າໄດ້ຫລຽວເບິ່ງ ແລະ ໄດ້ເຫັນຊາຍຜູ້ໜຶ່ງ, ແລະ ເພິ່ນສວມເສື້ອຄຸມສີຂາວ.

20 ແລະ ທູດໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງເບິ່ງ [ກ]ຜູ້ໜຶ່ງໃນຈຳນວນອັກຄະສາວົກສິບສອງຂອງພຣະເມສານ້ອຍ.

21 ຈົ່ງເບິ່ງ, ເພິ່ນຈະເຫັນ ແລະ ບັນທຶກເລື່ອງເຫລົ່ານີ້ທີ່ເຫລືອຢູ່; ແທ້ຈິງແລ້ວ, ຂຽນຫລາຍເລື່ອງທີ່ມີມາແລ້ວ.

22 ແລະ ເພິ່ນຈະບັນທຶກເລື່ອງກ່ຽວກັບຄາວສິ້ນສຸດໂລກອີກ.

23 ດັ່ງນັ້ນສິ່ງທີ່ເພິ່ນບັນທຶກນັ້ນຖືກຕ້ອງ ແລະ ຈິງ; ແລະ ຈົ່ງເບິ່ງ ເລື່ອງເຫລົ່ານີ້ທີ່ບັນທຶກໄວ້ມີຢູ່ໃນ [ກ]ໜັງສືທີ່ເຈົ້າເຫັນແມ່ນໄດ້ອອກມາຈາກປາກຂອງຊາວຢິວ; ແລະ ເວລາທີ່ມັນອອກມາຈາກປາກຂອງຊາວຢິວ ຫລື ເວລາໜັງສືອອກມາຈາກປາກຂອງຊາວຢິວນັ້ນ, ເລື່ອງທີ່ຂຽນໄວ້ແມ່ນແຈ່ມແຈ້ງ ແລະ ບໍລິສຸດ ແລະ [ຂ]ມີຄ່າທີ່ສຸດ ແລະ ງ່າຍແກ່ການເຂົ້າໃຈຂອງຄົນທັງປວງ.

24 ແລະ ຈົ່ງເບິ່ງ, ເລື່ອງທີ່ [ກ]ອັກຄະສາວົກຂອງພຣະເມສານ້ອຍຜູ້ນີ້ຈະຂຽນນັ້ນມີຫລາຍເລື່ອງ ແລະ ມີຫລາຍເລື່ອງ ຊຶ່ງເຈົ້າໄດ້ເຫັນແລ້ວ; ແລະ ຈົ່ງເບິ່ງ, ເລື່ອງທີ່ເຫລືອຢູ່ເຈົ້າກໍຈະໄດ້ເຫັນ.

25 ແຕ່ວ່າສິ່ງທີ່ເຈົ້າຈະເຫັນຕໍ່ຈາກນີ້ ເຈົ້າຢ່າໄດ້ຂຽນໄວ້; ເພາະອົງພຣະຜູ້ເປັນເຈົ້າໄດ້ແຕ່ງຕັ້ງອັກຄະສາວົກຂອງພຣະເມສາ

14 ກ ຢຄ 6:2; ຄພ 38:32–38.
15 ກ ຄພ 1:13–14.
ຂ ມຣກ 13:8; ຄພ 87:6.
16 ກ 1 ນຟ 22:13–14; ມມ 8:30.
17 ກ ຄມພ ຍຸກສຸດທ້າຍ.
ຂ 1 ນຟ 22:15–16.
ຄ 3 ນຟ 21:7, 20–29. ຄມພ ການຟື້ນຟູພຣະກິດຕິຄຸນ.
ງ ມມ 8:21, 41. ຄມພ ພັນທະສັນຍາຂອງອັບຣາຮາມ.
20 ກ ພນມ 1:1–3; 1 ນຟ 14:27.
23 ກ 1 ນຟ 13:20–24; ມມ 8:33.
ຂ 1 ນຟ 13:28–32.
24 ກ ອທ 4:16.

ນ້ອຍຂອງພຣະເຈົ້າໃຫ້ [ກ]ຂຽນເລື່ອງເຫລົ່າ
ນັ້ນ.
26 ແລະ ຜູ້ອື່ນໆທີ່ເຄີຍເປັນຢູ່ໃນເວລາ
ນັ້ນ, ພຣະອົງກໍຈະສະແດງເລື່ອງລາວທັງ
ໝົດຕໍ່ພວກເຂົາເໝືອນກັນ, ແລະ ພວກ
ເຂົາຈະຂຽນ; ແລະ ມັນຈະຖືກ [ກ]ຜະນຶກໄວ້
ເພື່ອຈະອອກມາໃນຄວາມບໍລິສຸດຂອງມັນ,
ຕາມຄວາມຈິງທີ່ມີຢູ່ໃນພຣະເມສານ້ອຍ,
ໃນເວລາອັນເໝາະສົມຂອງພຣະຜູ້ເປັນ
ເຈົ້າ, ອອກມາຫາເຊື້ອສາຍອິດສະຣາເອນ.
27 ແລະ ຂ້າພະເຈົ້ານີໄຟໄດ້ຍິນ ແລະ
ເປັນພະຍານວ່າ ຊື່ຂອງອັກຄະສາວົກຂອງ
ພຣະເມສານ້ອຍຄື [ກ]ໂຢຮັນ ຕາມຄຳເວົ້າ
ຂອງທູດ.
28 ແລະ ຈົ່ງເບິ່ງ, ຂ້າພະເຈົ້ານີໄຟຖືກ
ຫ້າມບໍ່ໃຫ້ຂຽນເລື່ອງທີ່ເຫລືອຢູ່ກ່ຽວກັບສິ່ງ
ທີ່ຂ້າພະເຈົ້າໄດ້ເຫັນ ແລະ ໄດ້ຍິນມາ; ດັ່ງ
ນັ້ນເລື່ອງທີ່ຂ້າພະເຈົ້າຂຽນໄວ້ ຈຶ່ງພຽງພໍ
ເທົ່ານີ້; ແລະ ຂ້າພະເຈົ້າໄດ້ຂຽນມັນໄວ້ພຽງ
ສ່ວນໜ້ອຍໜຶ່ງຂອງສິ່ງທັງໝົດທີ່ຂ້າພະ
ເຈົ້າໄດ້ເຫັນມາ.
29 ແລະ ຂ້າພະເຈົ້າຂໍເປັນພະຍານວ່າ
ຂ້າພະເຈົ້າໄດ້ເຫັນສິ່ງທີ່ [ກ]ບິດາຂອງຂ້າພະ
ເຈົ້າໄດ້ເຫັນ ແລະ ທູດຂອງພຣະຜູ້ເປັນເຈົ້າ
ໄດ້ເຮັດໃຫ້ຂ້າພະເຈົ້າຮູ້.
30 ແລະ ບັດນີ້ຂ້າພະເຈົ້າຂໍຈົບການເວົ້າ
ກ່ຽວກັບສິ່ງທີ່ຂ້າພະເຈົ້າໄດ້ເຫັນເວລາທີ່
ຂ້າພະເຈົ້າຖືກພາໄປໃນພຣະວິນຍານ;
ແລະ ຖ້າຫາກເລື່ອງອື່ນໆທີ່ຂ້າພະເຈົ້າໄດ້
ເຫັນແຕ່ບໍ່ໄດ້ຂຽນໄວ້, ເລື່ອງທີ່ຂ້າພະເຈົ້າ
ຂຽນໄວ້ນີ້ກໍເປັນ [ກ]ຄວາມຈິງ. ແລະ ເປັນໄປ
ດັ່ງນັ້ນ. ອາແມນ.

## ບົດທີ 15

*ລູກຫລານຂອງລີໄຮຈະໄດ້ຮັບພຣະກິດຕິຄຸນຈາກຄົນຕ່າງຊາດໃນຍຸກສຸດທ້າຍ—ການເຕົ້າໂຮມຂອງຊາວອິດສະຣາເອນຄືກັນກັບຕົ້ນໝາກກອກເທດ ຊຶ່ງກິ່ງງ່າເດີມຂອງມັນຈະຖືກຕໍ່ເຂົ້າກັນອີກ—ນີໄຟແປພາບນິມິດກ່ຽວກັບຕົ້ນໄມ້ແຫ່ງຊີວິດ ແລະ ເວົ້າເຖິງຄວາມຍຸດຕິທຳຂອງພຣະເຈົ້າໃນການແຍກຄົນຊົ່ວອອກຈາກຄົນຊອບທຳ. ປະມານ 600–592 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກຂ້າພະເຈົ້ານີໄຟຖືກພາໄປໃນພຣະວິນ
ຍານ ແລະ ເຫັນສິ່ງທັງໝົດເຫລົ່ານີ້ແລ້ວ,
ຂ້າພະເຈົ້າກໍກັບໄປຫາຜ້າເຕັ້ນຂອງບິດາ
ຂອງຂ້າພະເຈົ້າ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນພວກອ້າຍຂອງຂ້າພະເຈົ້າ
ແລະ ພວກເຂົາກຳລັງໂຕ້ຖຽງກັນກ່ຽວກັບ
ເລື່ອງທີ່ບິດາຂອງຂ້າພະເຈົ້າໄດ້ເວົ້າກັບ
ພວກເຂົາ.
3 ເພາະ ຕາມ ຈິງ ແລ້ວ ເພິ່ນ ໄດ້ ເວົ້າ
ຄວາມຈິງເຖິງເລື່ອງອັນຍິ່ງໃຫຍ່ຫລາຍ
ເລື່ອງກັບພວກເຂົາ ຊຶ່ງຍາກທີ່ຈະ [ກ]ເຂົ້າ
ໃຈນອກຈາກພວກເຂົາຈະທູນຖາມພຣະຜູ້
ເປັນເຈົ້າ; ແລະ ໂດຍທີ່ມີໃຈແຂງກະດ້າງ,
ສະນັ້ນພວກເຂົາຈຶ່ງບໍ່ໄດ້ຫລຽວຫາພຣະຜູ້
ເປັນເຈົ້າເທົ່າທີ່ຄວນ.
4 ແລະ ບັດນີ້ຂ້າພະເຈົ້ານີໄຟມີຄວາມ
ໂສກເສົ້າເພາະຄວາມແຂງກະດ້າງຂອງໃຈ
ຂອງພວກເຂົາ, ເພາະສິ່ງທີ່ຂ້າພະເຈົ້າໄດ້
ເຫັນມາ ແລະ ຮູ້ຈັກວ່າມັນຈະຕ້ອງເກີດຂຶ້ນ

25 *ກ* ຢຣ 20:30–31;
ພນມ 1:19.
26 *ກ* 2 ນຟ 27:6–23;
ອທ 3:21–27; 4:4–7;
ຄພ 35:18;
ຈສ—ປ 1:65.
27 *ກ* ພນມ 1:1–3.
29 *ກ* 1 ນຟ 8.
30 *ກ* 2 ນຟ 33:10–14.
**15** 3 *ກ* 1 ກຣທ 2:10–12;
ແອວ 12:9–11.

ຢ່າງຫລີກລ້ຽງບໍ່ໄດ້ ເພາະຄວາມຊົ່ວຮ້າຍ
ອັນໃຫຍ່ຫລວງຂອງລູກຫລານມະນຸດ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າກໍໝົດກຳລັງເພາະຄວາມທຸກຂອງ
ຂ້າພະເຈົ້າ, ເພາະວ່າຂ້າພະເຈົ້າເຫັນ
[ກ]ຄວາມທຸກຂອງຂ້າພະເຈົ້າໃຫຍ່ຫລວງ
ເໜືອທຸກສິ່ງ ເພາະ [ຂ]ຄວາມພິນາດຂອງຜູ້
ຄົນຂອງຂ້າພະເຈົ້າ, ເພາະຂ້າພະເຈົ້າເຫັນ
ການຕົກຂອງພວກເຂົາແລ້ວ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ຂ້າພະເຈົ້າ [ກ]ມີແຮງຂຶ້ນ ຂ້າພະເຈົ້າ
ຈຶ່ງໄດ້ເວົ້າກັບພວກອ້າຍຂອງຂ້າພະເຈົ້າ
ໂດຍປາດຖະໜາຢາກຮູ້ສາເຫດເລື່ອງທີ່
ພວກເຂົາກຳລັງໂຕ້ຖຽງກັນຢູ່.
7 ແລະ ພວກເຂົາໄດ້ເວົ້າວ່າ: ຈົ່ງເບິ່ງ,
ພວກເຮົາບໍ່ສາມາດເຂົ້າໃຈຄຳເວົ້າທີ່ບິດາ
ຂອງພວກເຮົາເວົ້າກ່ຽວກັບກິ່ງງ່າເດີມຂອງ
ຕົ້ນໝາກກອກເທດ ແລະ ກ່ຽວກັບຄົນຕ່າງ
ຊາດນັ້ນ.
8 ແລະ ຂ້າພະເຈົ້າໄດ້ຖາມພວກເຂົາວ່າ:
ພວກເຈົ້າໄດ້ [ກ]ທູນຖາມພຣະຜູ້ເປັນເຈົ້າ
ແລ້ວບໍ?
9 ແລະ ພວກເຂົາຕອບວ່າ: ພວກເຮົາຍັງ
ບໍ່ທັນໄດ້ຖາມເທື່ອ; ເພາະພຣະຜູ້ເປັນເຈົ້າ
ບໍ່ໄດ້ເຮັດເລື່ອງແນວນີ້ໃຫ້ພວກເຮົາຮູ້.
10 ຈົ່ງເບິ່ງ, ຂ້າພະເຈົ້າໄດ້ຖາມພວກເຂົາ
ວ່າ: ເປັນຫຍັງພວກເຈົ້າຈຶ່ງບໍ່ຮັກສາພຣະ
ບັນຍັດຂອງພຣະເຈົ້າ? ແລະ ເປັນຫຍັງ
ພວກເຈົ້າຈຶ່ງຍອມຕາຍເພາະ [ກ]ຄວາມແຂງ
ກະດ້າງຂອງໃຈຂອງພວກເຈົ້າ?
11 ພວກເຈົ້າຈື່ຈຳສິ່ງທີ່ພຣະຜູ້ເປັນເຈົ້າ
ໄດ້ກ່າວຫລືບໍ່?—ວ່າຖ້າຫາກເຈົ້າບໍ່ເຮັດ
ໃຈແຂງກະດ້າງ ແລະ [ກ]ທູນຖາມເຮົາດ້ວຍ
ສັດທາ ໂດຍເຊື່ອວ່າເຈົ້າຈະໄດ້ຮັບດ້ວຍ
ຄວາມພາກພຽນໃນການຮັກສາບັນຍັດ
ຂອງເຮົາ ແນ່ນອນສິ່ງເຫລົ່ານີ້ຈະເປັນທີ່ຮູ້
ຈັກແກ່ເຈົ້າ.
12 ຈົ່ງເບິ່ງ, ເຮົາໄດ້ບອກພວກເຈົ້າວ່າ
ເຊື້ອສາຍອິດສະຣາເອນຖືກປຽບທຽບໃສ່
ກັບຕົ້ນໝາກກອກເທດ ໂດຍພຣະວິນ
ຍານຂອງພຣະຜູ້ເປັນເຈົ້າທີ່ຢູ່ໃນບິດາ
ຂອງພວກເຮົາ; ແລະ ຈົ່ງເບິ່ງ ພວກເຮົາ
ບໍ່ໄດ້ແຕກອອກມາຈາກເຊື້ອສາຍອິດສະ
ຣາເອນບໍ, ແລະ ພວກເຮົາບໍ່ໄດ້ເປັນ [ກ]ກິ່ງ
ງ່າຂອງເຊື້ອສາຍອິດສະຣາເອນບໍ?
13 ແລະ ບັດນີ້, ເລື່ອງທີ່ບິດາຂອງພວກ
ເຮົາໝາຍເຖິງການຕໍ່ກິ່ງງ່າເດີມເຂົ້າກັບຕົ້ນ
ໂດຍຄວາມສົມບູນຂອງຄົນຕ່າງຊາດຄືໃນ
ຍຸກສຸດທ້າຍເວລາລູກຫລານຂອງພວກ
ເຮົາຍັງ [ກ]ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອ
ຖື, ແທ້ຈິງແລ້ວ, ເປັນເວລາຫລາຍປີ ແລະ
ຫລັງຈາກຫລາຍລຸ້ນຄົນ [ຂ]ພຣະເມຊີອາຈະ
ສະແດງໃນພຣະກາຍໃຫ້ປະຈັກແກ່ລູກ
ຫລານມະນຸດ, ຈາກນັ້ນຄວາມສົມບູນຂອງ
[ຄ]ພຣະກິດຕິຄຸນຂອງພຣະເມຊີອາຍ່ອມມາ
ສູ່ຄົນຕ່າງຊາດ ແລະ ຈາກ [ງ]ຄົນຕ່າງຊາດ
ມາສູ່ລູກຫລານຂອງພວກເຮົາຜູ້ທີ່ເຫລືອ
ຢູ່—

5 ກ ຄມພ ຍາກລຳບາກ, ຄວາມຍາກລຳບາກ.
ຂ ອນ 1:13; ມມ 6:1.
6 ກ ມຊ 1:10; ຈສ—ປ 1:20, 48.
8 ກ ມຊຍ 26:13; ແອວ 40:3. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
10 ກ ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
11 ກ ຢກບ 1:5–6; ອນ 1:15; ມຣນ 7:26; ຄພ 18:18. ຄມພ ທູນຂໍ.
12 ກ ປຖກ 49:22–26; 1 ນຟ 10:12–14; 19:24. ຄມພ ລີໄຮ, ບິດາຂອງນີໄຟ.
13 ກ 1 ນຟ 12:22–23; 2 ນຟ 26:15.
ຂ ຄມພ ພຣະເມຊີອາ.
ຄ ຄມພ ພຣະກິດຕິຄຸນ.
ງ 1 ນຟ 13:42; 22:5–10; ຄພ 14:10. ຄມພ ຄົນຕ່າງຊາດ.

14 ແລະ ໃນມື້ນັ້ນ ^ກ^ລູກຫລານຂອງພວກ
ເຮົາຜູ້ທີ່ເຫລືອຢູ່ຈຶ່ງຈະຮູ້ຈັກວ່າ ພວກເຂົາ
ເປັນເຊື້ອສາຍອິດສະຣາເອນ, ແລະ ຮູ້ຈັກ
ວ່າພວກເຂົາເປັນຄົນແຫ່ງ ^ຂ^ພັນທະສັນຍາ
ຂອງພຣະຜູ້ເປັນເຈົ້າ; ແລ້ວພວກເຂົາຈະ
ຮູ້ ແລະ ມາ ^ຄ^ຮູ້ຈັກບັນພະບຸລຸດຂອງພວກ
ເຂົາ, ແລະ ມາຮູ້ຈັກພຣະກິດຕິຄຸນຂອງ
ພຣະຜູ້ໄຖ່ຂອງພວກເຂົານຳອີກ ຊຶ່ງປະຕິ
ບັດຕໍ່ບັນພະບຸລຸດໂດຍພຣະອົງ; ດັ່ງນັ້ນ,
ພວກເຂົາຈະມີຄວາມຮູ້ເຖິງພຣະຜູ້ໄຖ່ຂອງ
ພວກເຂົາ ແລະ ຈຸດມຸ້ງໝາຍຂອງຄຳສອນ
ຂອງພຣະອົງ, ເພື່ອຈະໄດ້ຮູ້ວ່າຈະມາສູ່
ພຣະອົງ ແລະ ລອດໄດ້ແນວໃດ.
15 ແລ້ວໃນມື້ນັ້ນພວກເຂົາຈະບໍ່ປິຕິຍິນ
ດີຖວາຍຄວາມສັນລະເສີນພຣະເຈົ້າຜູ້
ເປັນນິດຂອງພວກເຂົາ, ຜູ້ເປັນ ^ກ^ຫີນຂອງ
ພວກເຂົາ ແລະ ເປັນຄວາມລອດຂອງ
ພວກເຂົາບໍ? ແທ້ຈິງແລ້ວ ໃນມື້ນັ້ນພວກ
ເຂົາຈະບໍ່ໄດ້ຮັບກຳລັງ ແລະ ການບຳລຸງ
ລ້ຽງຈາກ ^ຂ^ຕົ້ນອະງຸ່ນທີ່ແທ້ຈິງບໍ? ແທ້ຈິງ
ແລ້ວ ພວກເຂົາຈະບໍ່ມາຫາຝູງອັນແທ້ຈິງ
ຂອງພຣະເຈົ້າບໍ?
16 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ,
ແທ້ຈິງແລ້ວພວກເຂົາຈະຖືກຈົດຈຳອີກໃນ
ບັນດາເຊື້ອສາຍອິດສະຣາເອນ, ໂດຍທີ່ກິ່ງ
ງ່າເດີມຂອງຕົ້ນໝາກກອກເທດຂອງພວກ
ເຂົາຈະຖືກ ^ກ^ຕໍ່ເຂົ້າກັບຕົ້ນໝາກກອກເທດ
ອັນແທ້ຈິງ.
17 ແລະ ນີ້ຄືເລື່ອງທີ່ບິດາຂອງພວກເຮົາ
ໝາຍເຖິງ ແລະ ໝາຍຄວາມວ່າມັນຈະບໍ່
ບັງເກີດຂຶ້ນເທື່ອຈົນກວ່າພວກເຂົາຈະກະ
ຈັດກະຈາຍໄປໂດຍຄົນຕ່າງຊາດ; ແລະ
ເພິ່ນໝາຍຄວາມວ່າມັນຈະມາໂດຍທາງ
ຄົນຕ່າງຊາດເພື່ອພຣະຜູ້ເປັນເຈົ້າຈະໄດ້
ສະແດງອຳນາດຕໍ່ຄົນຕ່າງຊາດ, ຍ້ອນວ່າ
ແນວນີ້ພຣະອົງຈຶ່ງຖືກຊາວຢິວ ຫລື ເຊື້ອ
ສາຍອິດສະຣາເອນ ^ກ^ປະຕິເສດ.
18 ດັ່ງນັ້ນ, ບິດາຂອງພວກເຮົາບໍ່ໄດ້ເວົ້າ
ເຖິງລູກຫລານຂອງພວກເຮົາເທົ່ານັ້ນ, ແຕ່
ໄດ້ເວົ້າເຖິງເຊື້ອສາຍອິດສະຣາເອນທັງ
ໝົດນຳອີກ ໂດຍຊີ້ເຖິງພັນທະສັນຍາ ຊຶ່ງ
ຈະສຳເລັດໃນຍຸກສຸດທ້າຍນີ້ ຊຶ່ງພັນທະ
ສັນຍານັ້ນພຣະຜູ້ເປັນເຈົ້າໃຫ້ໄວ້ກັບອັບຣາ
ຮາມ ບັນພະບຸລຸດຂອງພວກເຮົາ, ມີຄວາມ
ວ່າ: ໃນ ^ກ^ລູກຫລານຂອງເຈົ້າທຸກຕະກຸນ
ຂອງແຜ່ນດິນໂລກຈະໄດ້ຮັບພອນ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເວົ້າກັບພວກເຂົາຢ່າງຍືດ
ຍາວກ່ຽວກັບເລື່ອງເຫລົ່ານີ້; ແທ້ຈິງແລ້ວ,
ຂ້າພະເຈົ້າໄດ້ເວົ້າກັບພວກເຂົາກ່ຽວກັບ
^ກ^ການຟື້ນຟູຂອງຊາວຢິວໃນຍຸກສຸດທ້າຍ.
20 ແລະ ຂ້າພະເຈົ້າໄດ້ເລົ່າຄຳເວົ້າຂອງ
^ກ^ເອຊາຢາໃຫ້ພວກເຂົາຟັງ ຊຶ່ງເພິ່ນໄດ້
ເວົ້າເຖິງການນຳກັບມາຂອງຊາວຢິວ ຫລື
ເຊື້ອສາຍອິດສະຣາເອນ; ແລະ ຫລັງຈາກ
ທີ່ພວກເຂົາຖືກນຳກັບມາແລ້ວ, ພວກເຂົາ
ຈະບໍ່ສັບສົນອີກຕໍ່ໄປ ແລະ ຈະບໍ່ແຕກກະ
ຈັດກະຈາຍໄປອີກ. ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ຂ້າພະເຈົ້າໄດ້ເວົ້າຫລາຍຢ່າງ
ກັບພວກອ້າຍຂອງຂ້າພະເຈົ້າຈົນວ່າພວກ

14 *ກ* 2 ນຟ 10:2; 3 ນຟ 5:21–26; 21:4–7.
*ຂ* ຄມພ ພັນທະສັນຍາຂອງອັບຣາຮາມ.
*ຄ* 2 ນຟ 3:12; 30:5; ມມ 7:1, 9–10; ຄພ 3:16–20. ເບິ່ງ ໜ້າວິເຄາະສະບັບຂອງພຣະຄຳພີມໍມອນ ນຳອີກ.
15 *ກ* ຄມພ ຫີນ.
*ຂ* ປຖກ 49:11; ຢຮ 15:1.
16 *ກ* ຢຄ 5:60–68.
17 *ກ* ຄມພ ຄຶງ, ການຄຶງ.
18 *ກ* ປຖກ 12:1–3; ອຣຣ 2:6–11.
19 *ກ* 1 ນຟ 19:15. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
20 *ກ* 1 ນຟ 19:23.

ເຂົາສະຫງົບລົງ ແລະ ໄດ້ [ຂ]ຖ່ອມຕົວຕໍ່ພຣະ
ຜູ້ເປັນເຈົ້າ.
21 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ຖາມຂ້າພະເຈົ້າອີກ, ມີຄວາມ
ວ່າ: ເລື່ອງທີ່ບິດາຂອງພວກເຮົາເຫັນໃນ
ຄວາມຝັນນັ້ນໝາຍຄວາມວ່າແນວໃດ?
[ກ]ຕົ້ນໄມ້ທີ່ເພິ່ນເຫັນນັ້ນໝາຍຄວາມວ່າ
ແນວໃດ?
22 ແລະ ຂ້າພະເຈົ້າຕອບພວກເຂົາວ່າ
ມັນແມ່ນເຄື່ອງໝາຍແທນ [ກ]ຕົ້ນໄມ້ແຫ່ງຊີ
ວິດ.
23 ແລະ ພວກເຂົາໄດ້ຖາມຂ້າພະເຈົ້າ
ວ່າ: [ກ]ຮາວເຫລັກທີ່ບິດາຂອງພວກເຮົາ
ເຫັນຊຶ່ງພາໄປຫາຕົ້ນໄມ້ນັ້ນ ໝາຍຄວາມ
ວ່າແນວໃດ?
24 ແລະ ຂ້າພະເຈົ້າຕອບພວກເຂົາ, ນັ້ນ
ຄື [ກ]ພຣະຄຳຂອງພຣະເຈົ້າ; ແລະ ຜູ້ໃດທີ່
ຈະເຊື່ອຟັງພຣະຄຳຂອງພຣະເຈົ້າ ແລະ
ຈະ [ຂ]ຍຶດໝັ້ນແລ້ວ, ພວກເຂົາຈະບໍ່ຕາຍ
ເລີຍ; ທັງ [ຄ]ສິ່ງລໍ້ລວງ ແລະ [ງ]ລູກສອນໄຟ
ຂອງ [ຈ]ຜູ້ປໍລະປັກກໍຈະບໍ່ອາດເອົາຊະນະ
ໂດຍຈະເຮັດໃຫ້ພວກເຂົາຕາບອດ ເພື່ອ
ຈະນຳພວກເຂົາໄປສູ່ຄວາມພິນາດໄດ້.
25 ດັ່ງນັ້ນ, ຂ້າພະເຈົ້ານີໄຟໄດ້ຊັກຊວນ
ໃຫ້ພວກເຂົາ [ກ]ເອົາໃຈໃສ່ພຣະຄຳຂອງ
ພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ຂ້າພະເຈົ້າ
ໄດ້ຊັກຊວນພວກເຂົາດ້ວຍສຸດພະລັງແຫ່ງ
ຈິດວິນຍານຂອງຂ້າພະເຈົ້າ ແລະ ດ້ວຍສຸດ
ຄວາມສາມາດທີ່ຂ້າພະເຈົ້າມີຢູ່ ເພື່ອໃຫ້
ພວກເຂົາເອົາໃຈໃສ່ພຣະຄຳຂອງພຣະເຈົ້າ
ແລະ ຈື່ຈຳທີ່ຈະຮັກສາພຣະບັນຍັດຂອງ
ພຣະອົງສະເໝີໄປໃນທຸກຢ່າງ.
26 ແລະ ພວກເຂົາໄດ້ຖາມຂ້າພະເຈົ້າ
ວ່າ [ກ]: ແມ່ນ້ຳທີ່ບິດາຂອງພວກເຮົາເຫັນນັ້ນ
ໝາຍຄວາມວ່າແນວໃດ?
27 ແລະ ຂ້າພະເຈົ້າຕອບພວກເຂົາ
ວ່າ [ກ]ນ້ຳທີ່ບິດາຂອງຂ້າພະເຈົ້າເຫັນນັ້ນ
ຄື [ຂ]ຄວາມສົກກະປົກ ແລະ ຈິດໃຈຂອງ
ເພິ່ນມົກໝຸ້ນຢູ່ກັບສິ່ງອື່ນຫລາຍຈົນບໍ່ເຫັນ
ຄວາມສົກກະປົກຂອງນ້ຳນັ້ນ.
28 ແລະ ຂ້າພະເຈົ້າໄດ້ເວົ້າກັບພວກເຂົາ
ວ່າ ນັ້ນຄື [ກ]ເຫວເລິກອັນເປັນຕາຢ້ານ ຊຶ່ງ
ແຍກຄົນຊົ່ວອອກຈາກຕົ້ນໄມ້ແຫ່ງຊີວິດ
ແລະ ຈາກໄພ່ພົນຂອງພຣະເຈົ້ານຳອີກ.
29 ແລະ ຂ້າພະເຈົ້າໄດ້ເວົ້າກັບພວກເຂົາ
ວ່າ ນັ້ນຄືເຄື່ອງໝາຍແທນ [ກ]ນະລົກອັນ
ເປັນຕາຢ້ານຊຶ່ງທູດໄດ້ກ່າວກັບຂ້າພະເຈົ້າ
ທີ່ຕຽມໄວ້ສຳລັບຄົນຊົ່ວ.
30 ແລະ ຂ້າພະເຈົ້າໄດ້ເວົ້າກັບພວກ
ເຂົາວ່າ ບິດາຂອງພວກເຮົາໄດ້ເຫັນອີກວ່າ
[ກ]ຄວາມຍຸດຕິທຳຂອງພຣະເຈົ້າໄດ້ແຍກຄົນ
ຊົ່ວອອກຈາກຄົນຊອບທຳ; ແລະ ຄວາມ
ສະຫວ່າງຂອງທີ່ນັ້ນເໝືອນດັ່ງຄວາມສະ
ຫວ່າງຂອງໄຟທີ່ກຳລັງລຸກ, ຊຶ່ງຂຶ້ນໄປເຖິງ
ພຣະເຈົ້າຕະຫລອດໄປ ແລະ ຕະຫລອດ
ການ ແລະ ບໍ່ມີວັນສິ້ນສຸດ.
31 ແລະ ພວກເຂົາໄດ້ຖາມຂ້າພະເຈົ້າ
ວ່າ: ສິ່ງເຫລົ່ານີ້ໝາຍເຖິງຄວາມທໍລະມານ

---

20 ຂ 1 ນຟ 16:5, 24, 39.
21 ກ 1 ນຟ 8:10–12.
22 ກ 1 ນຟ 11:4, 25; ມຊ 3:9.
23 ກ 1 ນຟ 8:19–24.
24 ກ ຄມພ ພຣະຄຳຂອງພຣະເຈົ້າ.
ຂ 1 ນຟ 8:30; 2 ນຟ 31:20.
ຄ 1 ນຟ 8:23. ຄມພ ລໍ້ລວງ, ການລໍ້ລວງ.
ງ ອຟຊ 6:16; ຄພ 3:8; 27:17.
ຈ ຄມພ ມານ.
25 ກ ຄພ 11:2; 32:4; 84:43–44.
26 ກ 1 ນຟ 8:13.
27 ກ 1 ນຟ 12:16.
ຂ ຄມພ ສົກກະປົກ, ຄວາມສົກກະປົກ.
28 ກ ລກ 16:26; 1 ນຟ 12:18; 2 ນຟ 1:13.
29 ກ ຄມພ ນະລົກ.
30 ກ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.

ຂອງ ຮ່າງ ກາຍ ໃນ ວັນ ເວລາ ແຫ່ງ [ກ]ການ ທົດ ລອງ, ຫລື ໝາຍ ເຖິງ ພາວະ ສຸດ ທ້າຍ ຂອງ ຈິດ ວິນ ຍານ ຫລັງ ຈາກ [ຂ]ຄວາມ ຕາຍ ຂອງຮ່າງກາຍຝ່າຍໂລກ, ຫລື ມັນເວົ້າເຖິງ ເລື່ອງຊຶ່ງເປັນຝ່າຍໂລກ?

32 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ ພະເຈົ້າໄດ້ຕອບ ພວກ ເຂົາວ່າ ມັນເປັນ ເຄື່ອງໝາຍແທນທັງຝ່າຍໂລກ ແລະ ຝ່າຍ ວິນຍານ; ເພາະມື້ນັ້ນຈະມາເຖິງທີ່ພວກ ເຂົາຈະຖືກພິພາກສາຕາມ [ກ]ການກະທຳ ຂອງພວກເຂົາ, ແທ້ຈິງແລ້ວ, ແມ່ນການກະ ທຳທີ່ຮ່າງກາຍຝ່າຍໂລກກະທຳໄປໃນວັນ ເວລາແຫ່ງການທົດລອງ.

33 ດັ່ງນັ້ນ, ຖ້າຫາກພວກເຂົາຈະ [ກ]ຕາຍ ໃນຄວາມຊົ່ວຮ້າຍຂອງພວກເຂົາ, ພວກ ເຂົາຈະຖືກ [ຂ]ປະຖິ້ມຕາມເລື່ອງທີ່ເປັນຝ່າຍ ວິນ ຍານ ເໝືອນ ກັນ ຊຶ່ງກ່ຽວ ກັບ ຄວາມ ຊອບທຳ; ດັ່ງນັ້ນ, ພວກເຂົາຈະຕ້ອງຖືກນຳ ມາຢືນຢູ່ຕໍ່ພຣະພັກຂອງພຣະເຈົ້າເພື່ອຮັບ [ຄ]ການພິພາກສາຈາກ [ງ]ການກະທຳຂອງ ພວກເຂົາ; ແລະ ຖ້າຫາກການກະທຳຂອງ ພວກເຂົາສົກກະປົກ, ພວກເຂົາຍ່ອມຕ້ອງ ເປັນຄົນ [ຈ]ສົກກະປົກ; ແລະ ຖ້າຫາກພວກ ເຂົາສົກກະປົກກໍຕ້ອງຈຳເປັນວ່າຈະ [ສ]ຢູ່ໃນ ອານາຈັກຂອງພຣະເຈົ້າບໍ່ໄດ້; ຫາກເປັນ ດັ່ງນັ້ນ, ອານາຈັກຂອງພຣະເຈົ້າກໍຕ້ອງສົກ ກະປົກໄປນຳ.

34 ແຕ່ຈົ່ງເບິ່ງ, ເຮົາເວົ້າກັບພວກເຈົ້າວ່າ, ອານາຈັກຂອງພຣະເຈົ້າຈະບໍ່ [ກ]ສົກກະປົກ ແລະ ສິ່ງທີ່ເປິເປື້ອນຈະເຂົ້າໄປໃນອານາ ຈັກຂອງພຣະເຈົ້າບໍ່ໄດ້; ດັ່ງນັ້ນ ຈຳຕ້ອງມີ ບ່ອນສົກກະປົກບ່ອນໜຶ່ງຕຽມໄວ້ສຳລັບສິ່ງ ທີ່ສົກກະປົກນັ້ນ.

35 ແລະ ມີບ່ອນໜຶ່ງຕຽມໄວ້ແລ້ວ, ແທ້ ຈິງແລ້ວ, ແມ່ນ [ກ]ນະລົກອັນເປັນຕາຢ້ານ ຊຶ່ງເຮົາໄດ້ເວົ້າມາ ແລະ [ຂ]ມານເປັນຜູ້ຕຽມ ມັນໄວ້; ດັ່ງນັ້ນ ພາວະສຸດທ້າຍຂອງຈິດວິນ ຍານຂອງມະນຸດຄື ຈະຢູ່ໃນອານາຈັກຂອງ ພຣະເຈົ້າ ຫລື ຖືກຂັບໄລ່ອອກໄປ ເພາະ [ຄ]ຄວາມຍຸດຕິທຳ ຊຶ່ງເຮົາໄດ້ເວົ້າມັນມາ ແລ້ວ.

36 ດັ່ງນັ້ນ, ຄົນ ຊົ່ວ ຈຶ່ງ ຖືກ ປະຕິ ເສດ ໄປ ຈາກຄົນຊອບທຳ ແລະ ຈາກ [ກ]ຕົ້ນໄມ້ ແຫ່ງຊີວິດນຳອີກ ຊຶ່ງໝາກຂອງມັນມີຄ່າ ແລະ [ຂ]ໜ້າເພິ່ງປາດຖະໜາທີ່ສຸດເໜືອ ກວ່າໝາກໄມ້ໃດໆທັງສິ້ນ; ແທ້ຈິງແລ້ວ, ມັນເປັນ [ຄ]ສິ່ງທີ່ຍິ່ງໃຫຍ່ທີ່ສຸດໃນ [ງ]ຂອງ ປະທານຈາກພຣະເຈົ້າ. ແລະ ຂ້າພະເຈົ້າ ໄດ້ເວົ້າກັບພວກອ້າຍຂອງຂ້າພະເຈົ້າດັ່ງ ນັ້ນ. ອາແມນ.

## ບົດທີ 16

*ຄົນ ຊົ່ວ ຖື ເອົາ ຄວາມ ຈິງ ເປັນ ເລື່ອງ ຮຸນ*

31 *ກ* ແອວ 12:24; 42:10; ຣລມ 13:38.
*ຂ* ແອວ 40:6, 11–14.
32 *ກ* ຄມພ ວຽກງານ.
33 *ກ* ມຊຢ 15:26; ມຣນ 10:26.
*ຂ* ແອວ 12:12–16; 40:26.
*ຄ* ຄມພ ພິພາກສາ, ການ ພິພາກສາຄັ້ງສຸດທ້າຍ.
*ງ* 3 ນຟ 27:23–27.
*ຈ* 2 ນຟ 9:16; ຄພ 88:35.
*ສ* ພສສ 15; 24:3–4; ແອວ 11:37; ຄພ 76:50–70; ມຊ 6:57.
34 *ກ* ຄມພ ສົກກະປົກ, ຄວາມສົກກະປົກ.
35 *ກ* 2 ນຟ 9:19; ມຊຢ 26:27. ຄມພ ນະລົກ.
*ຂ* 1 ນຟ 14:9; ຄພ 1:35.
*ຄ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
36 *ກ* ປຖກ 2:9; 2 ນຟ 2:15.
*ຂ* 1 ນຟ 8:10–12; ແອວ 32:42.
*ຄ* ຄພ 6:13.
*ງ* ຄພ 14:7. ຄມພ ຊີວິດນິລັນດອນ.

*ແຮງ—ລູກຊາຍຂອງລີໄຮແຕ່ງງານກັບລູກ
ສາວຂອງອິດຊະມາເອນ—ເລໄຮນາພາ
ພວກເຂົາເດີນທາງໃນຖິ່ນແຫ້ງແລ້ງກັນ
ດານ—ຂ່າວສານຈາກພຣະຜູ້ເປັນເຈົ້າໄດ້
ຖືກຂຽນໄວ້ເທິງເລໄຮນາເປັນບາງຄັ້ງ—
ການຕາຍຂອງອິດຊະມາເອນ; ຄອບຄົວ
ຂອງລາວຈົ່ມຍ້ອນຄວາມທຸກ. ປະມານ
600–592 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື,
ຂ້າພະເຈົ້ານີໄຟໄດ້ເວົ້າກັບພວກອ້າຍຂອງ
ຂ້າພະເຈົ້າຈົບແລ້ວ, ຈົ່ງເບິ່ງ ພວກເຂົາໄດ້
ເວົ້າກັບຂ້າພະເຈົ້າວ່າ: ເຈົ້າໄດ້ກ່າວເລື່ອງ
ຮຸນແຮງກັບພວກເຮົາເກີນກວ່າພວກເຮົາ
ຈະທົນໄດ້.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເວົ້າກັບພວກເຂົາວ່າ ເຮົາຮູ້ວ່າ
ເຮົາໄດ້ເວົ້າເລື່ອງຮຸນແຮງຕໍ່ຄົນຊົ່ວຕາມ
ຄວາມຈິງ; ແລ້ວຄົນຊອບທຳນັ້ນເຮົາຮັບ
ຮອງ ແລະ ໃຫ້ຖ້ອຍຄຳວ່າ ພວກເຂົາຈະໄດ້
ຮັບການຍົກຂຶ້ນໃນວັນສຸດທ້າຍ; ດັ່ງນັ້ນ,
ຄົນ [ກ]ຜິດຍ່ອມຖືເອົາ [ຂ]ຄວາມຈິງເປັນເລື່ອງ
ຮຸນແຮງເພາະມັນ [ຄ]ບາດໃຈເຂົາເຖິງສ່ວນ
ເລິກທີ່ສຸດ.
3 ແລະ ບັດນີ້ພວກອ້າຍຂອງເຮົາເອີຍ,
ຖ້າຫາກພວກເຈົ້າຊອບທຳ ແລະ ເຕັມໃຈ
ຈະເຊື່ອຟັງຄວາມຈິງ ແລະ ເອົາໃຈໃສ່
ຄວາມຈິງເພື່ອພວກເຈົ້າຈະໄດ້ [ກ]ເດີນໄປ
ຢ່າງພາກພູມໃຈຕໍ່ພຣະພັກຂອງພຣະເຈົ້າ,
ແລ້ວພວກເຈົ້າຈະບໍ່ຈົ່ມເພາະຄວາມຈິງ
ແລະ ເວົ້າວ່າ: ເຈົ້າເວົ້າເລື່ອງຮຸນແຮງຕໍ່
ຕ້ານພວກເຮົາ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ຊັກຊວນພວກອ້າຍຂອງ
ຂ້າພະເຈົ້າດ້ວຍສຸດຄວາມພາກພຽນເພື່ອ
ໃຫ້ຮັກສາພຣະບັນຍັດຂອງພຣະຜູ້ເປັນ
ເຈົ້າ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ [ກ]ຖ່ອມຕົວລົງຕໍ່ພຣະພັກຂອງພຣະ
ຜູ້ເປັນເຈົ້າ; ເຖິງຂະໜາດທີ່ຂ້າພະເຈົ້າເກີດ
ຄວາມປິຕິຍິນດີ ແລະ ມີຄວາມຫວັງໃນຕົວ
ຂອງພວກເຂົາ, ວ່າພວກເຂົາຈະເດີນໃນ
ທາງຂອງຄວາມຊອບທຳ.
6 ບັດນີ້, ເລື່ອງທັງໝົດນີ້ໄດ້ເວົ້າ ແລະ
ໄດ້ເຮັດໄປຂະນະທີ່ບິດາຂອງຂ້າພະເຈົ້າ
ອາໄສຢູ່ທີ່ຜ້າເຕັ້ນໃນຮ່ອມພູທີ່ເພິ່ນເອີ້ນວ່າ
ເລມູເອນ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ຮັບເອົາ [ກ]ລູກສາວຄົນໜຶ່ງ
ຂອງອິດຊະມາເອນມາເປັນ [ຂ]ເມຍ; ແລະ
ພວກອ້າຍຂອງຂ້າພະເຈົ້າກໍໄດ້ຮັບເອົາລູກ
ສາວຄົນອື່ນໆຂອງອິດຊະມາເອນມາເປັນ
ເມຍ; ແລະ [ຄ]ໂຊຣຳກໍໄດ້ຮັບເອົາລູກສາວ
ກົກຂອງອິດຊະມາເອນມາເປັນເມຍເໝືອນ
ກັນ.
8 ແລະ ດັ່ງນັ້ນບິດາຂອງຂ້າພະເຈົ້າໄດ້
ເຮັດໃຫ້ພຣະບັນຍັດຂອງພຣະຜູ້ເປັນເຈົ້າ
ທີ່ປະທານໃຫ້ເພິ່ນສຳເລັດໂດຍຄົບຖ້ວນ.
ແລະ ຂ້າພະເຈົ້ານີໄຟໄດ້ຮັບພອນຢ່າງຍິ່ງ
ຈາກພຣະຜູ້ເປັນເຈົ້າເໝືອນກັນ.

**16** 2*ກ* ຢຣ 3:20;
2 ນຟ 33:5;
ອນ 1:23;
ຣລມ 14:10.
ຄມພ ຮູ້ສຶກຜິດ,
ຄວາມຮູ້ສຶກຜິດ.
*ຂ* ສພສ 15:10;
2 ນຟ 1:26; 9:40;
ຣລມ 13:24–26.
*ຄ* ກຈກ 5:33;
ມຊຢ 13:7.
3*ກ* ຄພ 5:21.
ຄມພ ເດີນ, ເດີນໄປ
ກັບພຣະເຈົ້າ.
5*ກ* 1 ນຟ 16:24, 39; 18:4.
7*ກ* 1 ນຟ 7:1.
*ຂ* ຄມພ ແຕ່ງງານ,
ການແຕ່ງງານ.
*ຄ* 1 ນຟ 4:35;
2 ນຟ 5:5–6.

9 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ສຸ
ລະ ສຽງ ຂອງ ພຣະ ຜູ້ ເປັນ ເຈົ້າ ໄ ດ້ ຮັບ ສັ່ງ
ກັບບິດາຂອງຂ້າພະເຈົ້າໃນຕອນກາງຄືນ
ແລະ ບັນຊາເພິ່ນໃຫ້ອອກເດີນທາງໄປໃນ
ຖິ່ນແຫ້ງແລ້ງກັນດານໃນມື້ຕໍ່ມາ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ບິດາຂອງຂ້າພະເຈົ້າໄດ້ຕື່ນຂຶ້ນໃນຕອນ
ເຊົ້າ ແລະ ອອກໄປທີ່ປາກປະຕູຜ້າເຕັ້ນ
ນັ້ນ, ເພິ່ນແປກໃຈຫລາຍທີ່ເຫັນ ກລູກກົມ
ອັນມີຝີມືແປກປະຫລາດລູກໜຶ່ງວາງຢູ່ເທິງ
ພື້ນດິນ; ແລະ ມັນເປັນທອງເຫລືອງຢ່າງດີ.
ແລະ ພາຍໃນລູກກົມມີເຂັມສອງອັນ; ແລະ
ເຂັມໜຶ່ງຊີ້ໄປທາງທີ່ພວກເຮົາຄວນໄປ ໃນ
ຖິ່ນແຫ້ງແລ້ງກັນດານ.
11 ແ ລ ະ ເ ຫ ດ ກາ ນ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຮົາໄດ້ເຕົ້າໂຮມສິ່ງຂອງຕ່າງໆທີ່ຈະ
ນຳໄປໃນຖິ່ນແຫ້ງແລ້ງກັນດານ ແລະ ສະ
ບຽງອາຫານທີ່ຍັງເຫລືອຢູ່ທັງໝົດ ຊຶ່ງພຣະ
ຜູ້ເປັນເຈົ້າປະທານໃຫ້ພວກເຮົາ; ແລະ
ພວກເຮົາໄດ້ເອົາເມັດພືດທຸກຊະນິດເພື່ອ
ຈະໄດ້ເອົາໄປໃນຖິ່ນແຫ້ງແລ້ງກັນດານ.
12 ແ ລ ະ ເ ຫ ດ ກາ ນ ໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ເອົາຜ້າເຕັ້ນຂອງພວກເຮົາ
ແລະ ອອກເດີນທາງໄປໃນຖິ່ນແຫ້ງແລ້ງ
ກັນດານຂ້າມແມ່ນ້ຳເລມັນໄປ.
13 ແ ລ ະ ເ ຫ ດ ກາ ນ ໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ເດີນທາງໄປເປັນເວລາສີ່ມື້ໃນ
ທິດທາງຂ້ອນໄປທາງໃຕ້ຂອງທາງຕາເວັນ
ອອກສ່ຽງໃຕ້, ແລະ ພວກເຮົາໄດ້ຕັ້ງຜ້າ
ເຕັ້ນຂຶ້ນອີກ; ແລະ ພວກເຮົາໄດ້ຕັ້ງຊື່ບ່ອນ
ນັ້ນວ່າ ເຊເຊີ.
14 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຮົາໄດ້ເອົາຄັນທະນູ ແລະ ລູກທະນູ
ຂອງພວກເຮົາ, ແລະ ອອກໄປໃນຖິ່ນແຫ້ງ
ແລ້ງກັນດານ ເພື່ອລ່າສັດມາເປັນອາຫານ
ໃຫ້ຄອບຄົວຂອງພວກເຮົາ; ແລະ ຫລັງ
ຈາກໄດ້ສັດມາເປັນອາຫານໃຫ້ຄອບຄົວ
ແລ້ວ ພວກເຮົາກໍໄດ້ກັບມາຫາຄອບຄົວ
ຂອງພວກເຮົາອີກໃນຖິ່ນແຫ້ງແລ້ງກັນ
ດານທີ່ເຊເຊີ. ແລະ ພວກເຮົາໄດ້ເດີນທາງ
ໄປໃນຖິ່ນແຫ້ງແລ້ງກັນດານອີກຕາມທິດ
ທາງເດີມໂດຍຢູ່ໃນທາງທີ່ອຸດົມສົມບູນທີ່
ສຸດຂອງຖິ່ນແຫ້ງແລ້ງກັນດານອັນເປັນ
ຊາຍແດນໃກ້ ກທະເລແດງ.
15 ແ ລ ະ ເ ຫ ດ ກາ ນ ໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ເດີນທາງໄປເປັນເວລາຫລາຍ
ມື້ໂດຍການລ່າເນື້ອມາເປັນອາຫານຕາມ
ທາງທີ່ໄປນັ້ນດ້ວຍຄັນທະນູ ແລະ ລູກທະ
ນູ ແລະ ກ້ອນຫີນ ແລະ ກະຖຸນຂອງພວກ
ເຮົາ.
16 ແລະ ພວກເຮົາໄດ້ໄປຕາມ ກທິດທາງ
ຂອງລູກກົມ ຊຶ່ງນຳພວກເຮົາໄປໃນບ່ອນ
ທີ່ອຸດົມສົມບູນຫລາຍໃນຖິ່ນແຫ້ງແລ້ງກັນ
ດານ.
17 ແລະ ຫລັງ ຈາກ ພວກ ເຮົາ ເດີນ ທາງ
ເປັນເວລາຫລາຍມື້ແລ້ວ, ພວກເຮົາໄດ້ຕັ້ງ
ຜ້າເຕັ້ນຂອງພວກເຮົາຂຶ້ນຢູ່ຊົ່ວໄລຍະໜຶ່ງ
ເພື່ອຈະໄດ້ພັກຜ່ອນ ແລະ ຫາອາຫານໃຫ້
ຄອບຄົວຂອງພວກເຮົາອີກ.
18 ແລະ ເ ຫ ດ ກ າ ນ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາທີ່ຂ້າພະເຈົ້ານີໄຟອອກໄປລ່າສັດມາ
ເປັນອາຫານນັ້ນ, ຈົ່ງເບິ່ງ, ຂ້າພະເຈົ້າໄດ້
ເຮັດຄັນທະນູຂອງຂ້າພະເຈົ້າຫັກ ຊຶ່ງເຮັດ
ດ້ວຍ ກເຫລັກຢ່າງດີ; ແລະ ຫລັງຈາກທີ່
ຂ້າພະເຈົ້າໄດ້ເຮັດຄັນທະນູຫັກແລ້ວ, ຈົ່ງ
ເບິ່ງ, ພວກອ້າຍຂອງຂ້າພະເຈົ້າກໍໃຈຮ້າຍ

10 *ກ* ແອວ 37:38–46.
ຄມພ ເລຍໂຮນາ.
14 *ກ* ຄພ 17:1.
16 *ກ* 1 ນຟ 16:10, 16, 26;
18:12;
ແອວ 37:38–46.
18 *ກ* 2 ຊມອ 22:35.

ໃຫ້ຂ້າພະເຈົ້າເພາະການສູນເສຍຄັນທະ
ນູຂອງຂ້າພະເຈົ້າ, ສະນັ້ນພວກເຮົາຈຶ່ງຫາ
ອາຫານບໍ່ໄດ້.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ກັບມາຫາຄອບຄົວຂອງພວກ
ເຮົາ ໂດຍບໍ່ມີອາຫານ, ແລະ ອິດເມື່ອຍ
ຫລາຍ, ເນື່ອງຈາກການເດີນທາງຂອງ
ພວກເຂົາ, ພວກເຂົາຈຶ່ງໄດ້ປະສົບຄວາມ
ທຸກທໍລະມານຫລາຍ ເພາະຕ້ອງການ
ອາຫານທີ່ຈະກິນ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເລມັນກັບເລມູເອນ ແລະ ລູກຊາຍຂອງອິດ
ຊະມາເອນໄດ້ເລີ່ມຈົ່ມຫລາຍຂຶ້ນເພາະວ່າ
ຄວາມທຸກທໍລະມານ ແລະ ຄວາມທຸກຂອງ
ພວກເຂົາໃນຖິ່ນແຫ້ງແລ້ງກັນດານ; ແລະ
ບິດາຂອງຂ້າພະເຈົ້າກໍເລີ່ມຈົ່ມໃຫ້ພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງເພິ່ນຄືກັນ;
ແທ້ຈິງແລ້ວ, ແລະ ພວກເຂົາໄດ້ເສົ້າສະ
ຫລົດໃຈຢ່າງຍິ່ງ, ແລະ ທຸກຄົນກໍໄດ້ຈົ່ມໃຫ້
ພຣະຜູ້ເປັນເຈົ້າ.
21 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໂດຍທີ່ເປັນທຸກກັບພວກອ້າຍ
ຂອງຂ້າພະເຈົ້າ ເພາະການສູນເສຍຄັນ
ທະນູຂອງຂ້າພະເຈົ້າ, ແລະ ໂດຍທີ່ຄັນ
ທະນູຂອງພວກເຂົາບໍ່ມີສາຍ, ມັນຈຶ່ງເລີ່ມ
ລໍາບາກຫລາຍຂຶ້ນ, ແທ້ຈິງແລ້ວ, ເຖິງຂະ
ໜາດທີ່ພວກເຮົາຫາອາຫານບໍ່ໄດ້ເລີຍ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເວົ້າກັບພວກອ້າຍຂອງ
ຂ້າພະເຈົ້າຫລາຍຢ່າງ, ເພາະພວກເຂົາ
ເຮັດໃຈແຂງກະດ້າງອີກ, ຈົນເຖິງຂັ້ນ [ກ]ຈົ່ມ
ໃຫ້ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເຮັດຄັນທະນູອັນໜຶ່ງຂຶ້ນ
ດ້ວຍໄມ້, ແລະ ລູກທະນູລູກໜຶ່ງຈາກໄມ້
ຊື່ອັນໜຶ່ງ; ດັ່ງນັ້ນ, ຂ້າພະເຈົ້າໄດ້ຖືຄັນ
ທະນູກັບລູກທະນູ, ທັງກະຖຸນກັບກ້ອນ
ຫີນ. ແລະ ຂ້າພະເຈົ້າໄດ້ຖາມ [ກ]ບິດາຂອງ
ຂ້າພະເຈົ້າວ່າ: ລູກຄວນຈະອອກໄປຫາ
ອາຫານໃນທາງໃດ?
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ [ກ]ທູນຖາມພຣະຜູ້ເປັນເຈົ້າ, ເພາະທຸກ
ຄົນຖ່ອມຕົວແລ້ວ ເພາະຄໍາເວົ້າຂອງຂ້າ
ພະເຈົ້າ; ເພາະຂ້າພະເຈົ້າໄດ້ກ່າວກັບພວກ
ເຂົາຫລາຍເລື່ອງດ້ວຍພະລັງແຫ່ງຈິດວິນ
ຍານຂອງຂ້າພະເຈົ້າ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຸ
ລະສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງ
ບິດາຂອງຂ້າພະເຈົ້າ; ແລະ ເພິ່ນໄດ້ຖືກ [ກ]ຕິ
ສອນຢ່າງໜັກເພາະເພິ່ນໄດ້ຈົ່ມໃຫ້ພຣະ
ຜູ້ເປັນເຈົ້າ, ເຖິງຂະໜາດທີ່ເພິ່ນຖືກນໍາລົງ
ໄປສູ່ຄວາມເລິກແຫ່ງຄວາມເສົ້າສະຫລົດ
ໃຈ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຸ
ລະສຽງຂອງພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເພິ່ນວ່າ: ຈົ່ງເບິ່ງລູກກົມ, ແລະ ເບິ່ງສິ່ງທີ່
ຂຽນໄວ້ໃນນັ້ນ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ບິດາຂອງຂ້າພະເຈົ້າເຫັນສິ່ງທີ່ຂຽນໄວ້ໃນ
ລູກກົມ, ເພິ່ນກໍມີຄວາມຢ້ານກົວ ແລະ ຕົວ
ສັ່ນສາຍຢ່າງຍິ່ງ, ແລະ ພວກອ້າຍຂອງ
ຂ້າພະເຈົ້າກັບລູກຂອງອິດຊະມາເອນກັບ
ພວກເມຍຂອງພວກເຮົາກໍເໝືອນກັນ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເຫັນເຂັມຊີ້ງຢູ່ໃນລູກກົມ

22ກ ອພຍ 16:8; ຈບຊ 11:1.
23ກ ອພຍ 20:12; ມຊຢ 13:20.
24ກ ຄມພ ອະທິຖານ, ການອະທິຖານ, ຄໍາອະທິຖານ.
25ກ ອຫ 2:14. ຄມພ ຕິສອນ, ການຕິສອນ.

ວ່າ ມັນທຳງານຕາມ *ກ*ສັດທາ ແລະ ຄວາມ
ພາກພຽນ ແລະ ຄວາມເອົາໃຈໃສ່ຊຶ່ງພວກ
ເຮົາໃຫ້ແກ່ມັນ.
29 ແລະ ມີຂໍ້ຄວາມຂຽນໄວ້ໃໝ່ໆອີກ ຊຶ່ງ
ອ່ານງ່າຍໆ, ຊຶ່ງໄດ້ໃຫ້ *ກ*ຄວາມເຂົ້າໃຈແກ່
ພວກເຮົາກ່ຽວກັບທາງຂອງພຣະຜູ້ເປັນ
ເຈົ້າ; ແລະ ມັນມີຂຽນ ແລະ ປ່ຽນໄປເປັນ
ບາງຄັ້ງຕາມສັດທາ ແລະ ຄວາມພາກພຽນ
ຊຶ່ງພວກເຮົາໃຫ້ແກ່ມັນ. ແລະ ພວກເຮົາ
ຈຶ່ງເຫັນດັ່ງນັ້ນວ່າ ດ້ວຍວິທີ *ຂ*ນ້ອຍໆ ແລະ
ງ່າຍໆນີ້ ພຣະຜູ້ເປັນເຈົ້ານຳເລື່ອງອັນໃຫຍ່
ຍິ່ງມາໃຫ້.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ຂຶ້ນໄປເທິງຈອມພູຕາມທິດ
ທາງ, ຊຶ່ງໃຫ້ໄວ້ໃນລູກກົມນັ້ນ.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ຂ້າສັດປ່າ, ເຖິງຂະໜາດທີ່ໄດ້
ອາຫານມາໃຫ້ຄອບຄົວຂອງພວກເຮົາ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ກັບມາທີ່ຜ້າເຕັ້ນຂອງພວກເຮົາ,
ເອົາສັດທີ່ຂ້າພະເຈົ້າຂ້າມາພ້ອມ; ແລະ
ບັດນີ້ເມື່ອພວກເຂົາເຫັນຂ້າພະເຈົ້າໄດ້
ອາຫານມາ, ຄວາມສຸກຂອງພວກເຂົານັ້ນ
ລົ້ນເຫລືອ! ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ພວກເຂົາໄດ້ຖ່ອມຕົວຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າ, ແລະ ໄດ້ຖວາຍຄວາມ
ຂອບຄຸນແດ່ພຣະອົງ.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ອອກເດີນທາງອີກ, ໂດຍໄປ
ເກືອບຈະຊ້ຳທາງດຽວກັນກັບເມື່ອເລີ່ມຕົ້ນ;
ແລະ ຫລັງຈາກພວກເຮົາໄດ້ເດີນທາງໄປ
ເປັນເວລາຫລາຍມື້ ພວກເຮົາຈຶ່ງໄດ້ຕັ້ງຜ້າ
ເຕັ້ນຂອງພວກເຮົາຂຶ້ນອີກ, ເພື່ອຈະໄດ້ພັກ
ເຊົາຢູ່ຊົ່ວໄລຍະໜຶ່ງ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື *ກ*ອິດ
ຊະມາເອນໄດ້ສິ້ນຊີວິດ ແລະ ຖືກຝັງໄວ້ໃນ
ບ່ອນທີ່ເອີ້ນວ່າ ເນຮອມ.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກລູກສາວຂອງອິດຊະມາເອນກໍເປັນ
ທຸກຢ່າງຍິ່ງເພາະການສູນເສຍບິດາ ແລະ
ເພາະ *ກ*ຄວາມທຸກຂອງພວກເຂົາໃນຖິ່ນ
ແຫ້ງແລ້ງກັນດານ; ແລະ ພວກເຂົາຈຶ່ງໄດ້
ຈົ່ມໃຫ້ບິດາຂອງຂ້າພະເຈົ້າເພາະເພິ່ນໄດ້
ພາພວກເຂົາອອກມາຈາກແຜ່ນດິນເຢຣູ
ຊາເລັມໂດຍກ່າວວ່າບິດາຂອງພວກເຮົາ
ໄດ້ສິ້ນຊີວິດໄປແລ້ວ; ແທ້ຈິງແລ້ວ ພວກ
ເຮົາຊັດເຊພະເນຈອນມາຫລາຍແລ້ວໃນ
ຖິ່ນແຫ້ງແລ້ງກັນດານ, ແລະ ພວກເຮົາໄດ້
ທຸກ, ຫິວ, ກະຫາຍ, ແລະ ອິດເມື່ອຍຫລາຍ;
ແລະ ຫລັງຈາກຄວາມທຸກທັງໝົດນີ້ແລ້ວ
ພວກເຮົາຕ້ອງມາຕາຍໃນຖິ່ນແຫ້ງແລ້ງກັນ
ດານດ້ວຍຄວາມອຶດຫິວອີກ.
36 ແລະ ພວກເຂົາໄດ້ຈົ່ມໃຫ້ບິດາຂອງ
ຂ້າພະເຈົ້າດັ່ງນັ້ນ ແລະ ໄດ້ຈົ່ມໃຫ້ຂ້າພະ
ເຈົ້ານຳອີກ ແລະ ພວກເຂົາປາດຖະໜາທີ່
ຈະກັບຄືນໄປເຢຣູຊາເລັມ.
37 ແລະ ເລມັນໄດ້ເວົ້າກັບເລມູເອນ
ແລະ ພວກລູກຊາຍຂອງອິດຊະມາເອນອີກ
ວ່າ: ຈົ່ງເບິ່ງ, ໃຫ້ພວກເຮົາ *ກ*ຂ້າບິດາຂອງ
ພວກເຮົາກັບນີໄຟນ້ອງຊາຍຂອງພວກເຮົາ
ເສຍ ຜູ້ທີ່ຖືຕົນເປັນ *ຂ*ຜູ້ປົກຄອງ ແລະ ເປັນ
ຜູ້ສອນຂອງພວກເຮົາຜູ້ເປັນອ້າຍຂອງມັນ.

28 *ກ* ແອວ 37:40.
ຄມພ ສັດທາ.
29 *ກ* ຄມພ ເຂົ້າໃຈ,
ຄວາມເຂົ້າໃຈ.
*ຂ* 2 ກສ 5:13;
ຢກບ 3:4;
ແອວ 37:6–7, 41;
ຄພ 123:16.
34 *ກ* 1 ນຟ 7:2–6.
35 *ກ* ຄມພ ຍາກລຳບາກ,
ຄວາມຍາກລຳບາກ.
37 *ກ* 1 ນຟ 17:44.
ຄມພ ຄາດຕະກຳ,
ການຄາດຕະກຳ.
*ຂ* ປຖກ 37:9–11;
1 ນຟ 2:22; 18:10.

38 ບັດນີ້ມັນເວົ້າວ່າ ພຣະຜູ້ເປັນເຈົ້າໄດ້
ເວົ້າກັບມັນ ແລະວ່າ [ກ]ເຫລົ່າທູດໄດ້ສິດ
ສອນມັນນຳອີກ. ແຕ່ຈົ່ງເບິ່ງ, ພວກເຮົາ
ຮູ້ວ່າມັນຕົວະພວກເຮົາ; ແລະ ມັນເລົ່າ
ເລື່ອງເຫລົ່ານີ້ກັບພວກເຮົາ ແລະ ມັນເຮັດ
ມາຫລາຍຢ່າງໂດຍເລ່ຫລ່ຽມທີ່ສະຫລາດ
ແກມໂກງຂອງມັນ ເພື່ອຈະຫລອກລວງ
ຕາຂອງພວກເຮົາໂດຍຄິດວ່າ ມັນອາດຈະ
ນຳພວກເຮົາໄປຫາຖິ່ນແຫ້ງແລ້ງກັນດານ
ທີ່ແປກປະຫລາດ; ແລະ ຫລັງຈາກມັນນຳ
ພວກເຮົາໄປແລ້ວ ມັນກໍຈະຄິດຕັ້ງຕົນເປັນ
ກະສັດ ແລະ ປົກຄອງພວກເຮົາ ເພື່ອມັນ
ຈະໄດ້ເຮັດກັບພວກເຮົາຕາມຄວາມປາດ
ຖະໜາ ແລະ ຕາມຄວາມພໍໃຈຂອງມັນ.
ແລະ ຕາມວິທີນີ້ເລມັນອ້າຍຂອງຂ້າພະ
ເຈົ້າໄດ້ຍຸຍົງໃຈຂອງພວກເຂົາໃຫ້ໂມໂຫ
ຂຶ້ນ.

39 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າໄດ້ຢູ່ກັບພວກເຮົາ, ແທ້ຈິງ
ແລ້ວ, ເຖິງແມ່ນສຸລະສຽງຂອງພຣະຜູ້ເປັນ
ເຈົ້າໄດ້ມາເຖິງ ແລະ ຮັບສັ່ງກັບພວກເຂົາ
ຫລາຍຢ່າງ ແລະ [ກ]ຕິສອນພວກເຂົາຢ່າງ
ໜັກ; ແລະ ຫລັງຈາກພວກເຂົາຖືກຕິສອນ
ໂດຍສຸລະສຽງຂອງພຣະຜູ້ເປັນເຈົ້າແລ້ວ
ພວກເຂົາກໍເຊົາໃຈຮ້າຍ ແລະ ພວກເຂົາໄດ້
ກັບໃຈຈາກບາບຂອງພວກເຂົາ, ເຖິງຂະ
ໜາດທີ່ພຣະຜູ້ເປັນເຈົ້າໄດ້ປະທານພອນ
ໃຫ້ແກ່ພວກເຮົາດ້ວຍອາຫານອີກຈົນພວກ
ເຮົາບໍ່ຕາຍຍ້ອນ.

## ບົດທີ 17

*ນີໄຟໄດ້ຖືກບັນຊາໃຫ້ສ້າງເຮືອໃຫຍ່ລຳ
ໜຶ່ງ—ພວກອ້າຍຂອງເພິ່ນຂັດຂວາງ
ເພິ່ນ—ເພິ່ນຊັກຊວນພວກເຂົາໂດຍການ
ເລົ່າປະຫວັດສາດທີ່ພຣະເຈົ້າໄດ້ກະທຳ
ກັບອິດສະຣາເອນ—ນີໄຟເຕັມໄປດ້ວຍ
ອຳນາດຂອງພຣະເຈົ້າ—ພວກອ້າຍຂອງ
ເພິ່ນຖືກຫ້າມບໍ່ໃຫ້ແຕະຕ້ອງຮ່າງກາຍຂອງ
ເພິ່ນ, ຖ້າບໍ່ດັ່ງນັ້ນພວກເຂົາຈະຫ່ຽວແຫ້ງ
ເໝືອນດັ່ງຕົ້ນອໍ້ແຫ້ງ. ປະມານ 592–591
ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ອອກເດີນທາງອີກໃນຖິ່ນແຫ້ງແລ້ງ
ກັນດານ; ແລະ ນັບແຕ່ເວລານັ້ນພວກ
ເຮົາໄດ້ເດີນທາງເກືອບຈະໄປທາງຕາເວັນ
ອອກ. ແລະ ພວກເຮົາໄດ້ເດີນທາງ ແລະ
ລຸຍໄປກັບຄວາມທຸກທີ່ສຸດໃນຖິ່ນແຫ້ງແລ້ງ
ກັນດານ; ແລະ ພວກຜູ້ຍິງຂອງພວກເຮົາ
ໄດ້ເກີດລູກໃນຖິ່ນແຫ້ງແລ້ງກັນດານ.

2 ແລະ ພອນຂອງພຣະຜູ້ເປັນເຈົ້າທີ່
ປະທານໃຫ້ແກ່ພວກເຮົານັ້ນຍິ່ງໃຫຍ່ທີ່
ສຸດ, ຄືເວລານັ້ນພວກເຮົາໄດ້ດຳລົງຊີວິດ
ຢູ່ດ້ວຍຊີ້ນ [ກ]ດິບໃນຖິ່ນແຫ້ງແລ້ງກັນດານ,
ພວກຜູ້ຍິງຂອງພວກເຮົາກໍມີນ້ຳນົມຢ່າງ
ຫລວງຫລາຍໃຫ້ລູກຂອງພວກເຂົາ, ແລະ
ແຂງແຮງດີ, ແທ້ຈິງແລ້ວ, ແມ່ນເທົ່າທຽມ
ກັບພວກຜູ້ຊາຍ; ແລະ ພວກເຂົາອົດທົນຕໍ່
ການເດີນທາງໂດຍບໍ່ໄດ້ຈົ່ມວ່າ.

3 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ພຣະ
ບັນຍັດຂອງພຣະເຈົ້າຕ້ອງສຳເລັດ. ແລະ
ຖ້າຫາກເປັນໄປວ່າລູກຫລານມະນຸດຈະ
[ກ]ຮັກສາພຣະບັນຍັດຂອງພຣະເຈົ້າແລ້ວ
ພຣະອົງຍ່ອມບຳລຸງລ້ຽງດູພວກເຂົາ, ແລະ
ເຮັດໃຫ້ພວກເຂົາເຂັ້ມແຂງຂຶ້ນ, ແລະ ຈັດ

38 *ກ* 1 ນຟ 3:30–31; 4:3.
39 *ກ* ຄມພ ຕິສອນ, ການຕິສອນ.
**17** 2 *ກ* 1 ນຟ 17:12.
3 *ກ* ມຊຢ 2:41; ແອວ 26:12.
ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.

ຫາທາງຊຶ່ງ ໂດຍທາງນັ້ນພວກເຂົາຈະສຳ
ເລັດໄດ້ໃນສິ່ງທີ່ພຣະອົງບັນຊາພວກເຂົາ;
ດັ່ງນັ້ນ, ພຣະອົງໄດ້ [ຂ]ຈັດຫາທາງໃຫ້ພວກ
ເຮົາ ໃນ ເວລາ ທີ່ພວກເຮົາ ຢູ່ ໃນ ຖິ່ນ ແຫ້ງ
ແລ້ງກັນດານ.

4 ແລະ ພວກ ເຮົາ ໄດ້ ຢູ່ ມາ ເປັນ ເວລາ
ຫລາຍປີ, ແທ້ຈິງແລ້ວ, ແມ່ນເຖິງແປດປີໃນ
ຖິ່ນແຫ້ງແລ້ງກັນດານ.

5 ແລະ ພວກເຮົາໄດ້ມາເຖິງແຜ່ນດິນ ຊຶ່ງ
ພວກເຮົາເອີ້ນວ່າ ອຸດົມສົມບູນ, ເພາະມັນມີ
ໝາກໄມ້ນາໆຊະນິດ ແລະ ມີນ້ຳເຜີ້ງປ່ານຳ
ອີກ; ແລະ ທັງໝົດນີ້ພຣະຜູ້ເປັນເຈົ້າຕຽມ
ໄວ້ເພື່ອພວກເຮົາຈະບໍ່ຕາຍ. ແລະ ພວກ
ເຮົາເຫັນທະເລ ຊຶ່ງພວກເຮົາເອີ້ນວ່າ ອີຣີ
ອານທຳ, ຊຶ່ງພວກເຮົາແປວ່າ ຜືນນ້ຳອັນ
ກວ້າງໃຫຍ່.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ຕັ້ງຜ້າເຕັ້ນຂຶ້ນໃນແຄມຝັ່ງທະເລ;
ແລະ ເຖິງແມ່ນພວກເຮົາໄດ້ອົດທົນຮັບ
[ກ]ຄວາມທຸກ ແລະ ຄວາມຫຍຸ້ງຍາກມາ
ຫລາຍແລ້ວ, ແທ້ຈິງແລ້ວ, ເຖິງຂະໜາດ
ຂ້າພະເຈົ້າຂຽນໄວ້ໝົດບໍ່ໄດ້, ພວກເຮົາກໍ
ປິຕິຍິນດີຢ່າງຍິ່ງເມື່ອພວກເຮົາມາເຖິງຝັ່ງ
ທະເລ ແລະ ພວກເຮົາເອີ້ນບ່ອນນັ້ນວ່າ ອຸ
ດົມສົມບູນ ເພາະມັນມີໝາກໄມ້ຫລາຍໆ
ຊະນິດ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກ ຂ້າ ພະ ເຈົ້າ ນີໄຟ ໄດ້ພັກຜ່ອນຢູ່ໃນ
ແຜ່ນດິນອຸດົມສົມບູນເປັນເວລາຫລາຍມື້,
ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງ
ຂ້າພະເຈົ້າ, ມີຄວາມວ່າ: ລຸກຂຶ້ນ ແລະ ຈົ່ງ
ຂຶ້ນໄປເທິງພູ. ແລະ ເຫດການໄດ້ບັງເກີດ
ຂຶ້ນຄື ຂ້າພະເຈົ້າໄດ້ລຸກຂຶ້ນ ແລະ ໄດ້ຂຶ້ນ
ໄປເທິງພູ ແລະ ໄດ້ຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ ເປັນ ເຈົ້າ ໄດ້ຮັບສັ່ງ ກັບ ຂ້າ ພະ ເຈົ້າ, ມີ
ຄວາມວ່າ: ຈົ່ງສ້າງເຮືອລຳໜຶ່ງ ຕາມ [ກ]ວິທີ
ທີ່ເຮົາຈະສະແດງແກ່ເຈົ້າ, ເພື່ອເຮົາຈະນຳ
ຜູ້ຄົນຂອງເຈົ້າຂ້າມນ້ຳນີ້ໄປ.

9 ແລະ ຂ້າພະເຈົ້າໄດ້ທູນຖາມວ່າ: ຂ້າ
ແດ່ພຣະອົງເຈົ້າ, ຂ້ານ້ອຍຈະໄປທາງໃດ
ເພື່ອຈະໄດ້ຫາແຮ່ມາຫລໍ່ຫລອມ ເພື່ອຈະ
ເຮັດເຄື່ອງມືສ້າງເຮືອຕາມວິທີທີ່ພຣະອົງ
ໄດ້ສະແດງແກ່ຂ້ານ້ອຍ?

10 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະຜູ້ເປັນເຈົ້າເຮັດໃຫ້ຂ້າພະເຈົ້າຮູ້ວ່າ
ຈະໄປຫາແຮ່ຢູ່ບ່ອນໃດ ເພື່ອຈະໄດ້ມັນມາ
ເຮັດເປັນເຄື່ອງມື.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເຮັດເຄື່ອງເປົ່າລົມດ້ວຍ
ໜັງສັດເພື່ອໃຊ້ເປົ່າໄຟ ແລະ ຫລັງຈາກ
ຂ້າພະເຈົ້າໄດ້ເຮັດເຄື່ອງເປົ່າລົມເພື່ອຈະ
ໄດ້ໃຊ້ເປົ່າໄຟແລ້ວ, ຂ້າພະເຈົ້າໄດ້ເອົາຫີນ
ສອງກ້ອນມາຕ່ອຍກັນເພື່ອຈະໄດ້ກໍ່ໄຟ.

12 ເພາະຕັ້ງແຕ່ຕົ້ນມາພຣະຜູ້ເປັນເຈົ້າບໍ່
ຍອມໃຫ້ພວກເຮົາກໍ່ໄຟຫລາຍໃນເວລາທີ່
ພວກເຮົາເດີນທາງຢູ່ໃນຖິ່ນແຫ້ງແລ້ງກັນ
ດານ; ເພາະພຣະອົງບອກວ່າ: ເຮົາຈະເຮັດ
ໃຫ້ອາຫານຂອງເຈົ້າກັບເປັນຫວານເພື່ອ
ເຈົ້າຈະບໍ່ໄດ້ [ກ]ຫຸງຕົ້ມ;

13 ແລະ ເຮົາຈະເປັນແສງສະຫວ່າງໃຫ້
ເຈົ້າໃນຖິ່ນແຫ້ງແລ້ງກັນດານນຳອີກ; ແລະ
ເຮົາຈະ [ກ]ຕຽມທາງໄວ້ກ່ອນເຈົ້າຖ້າຫາກ
ເຈົ້າຈະຮັກສາພຣະບັນຍັດຂອງເຮົາ; ດັ່ງ
ນັ້ນ, ຕາບໃດທີ່ເຈົ້າຈະຮັກສາພຣະບັນຍັດ

3 ຂ 1 ນຟ 3:7.
6 ກ 2 ນຟ 4:20.
8 ກ 1 ນຟ 18:2.
12 ກ 1 ນຟ 17:2.
13 ກ ແອວ 37:38–39.

ຂອງເຮົາ ເຈົ້າຈະຖືກພາໄປຫາ [ຂ]ແຜ່ນດິນ
ແຫ່ງຄຳສັນຍາ; ແລະ ເຈົ້າຈະ [ຄ]ຮູ້ວ່າເຮົາ
ເປັນຜູ້ນຳເຈົ້າໄປ.
14 ແທ້ ຈິງ ແລ້ວ, ພຣະ ຜູ້ ເປັນ ເຈົ້າ ໄດ້
ບອກໄວ້ອີກວ່າ: ຫລັງຈາກເຈົ້າໄປ ເຖິງ
ແຜ່ນດິນແຫ່ງຄຳສັນຍາແລ້ວ, ເຈົ້າຈະ [ກ]ຮູ້
ວ່າ ເຮົາພຣະຜູ້ເປັນເຈົ້າເປັນ [ຂ]ພຣະເຈົ້າ;
ແລະ ວ່າເຮົາພຣະຜູ້ເປັນເຈົ້າໄດ້ປົດປ່ອຍ
ເຈົ້າ ໃຫ້ ພົ້ນ ຈາກຄວາມພິນາດ; ແທ້ ຈິງ
ແລ້ວ, ເຮົາພຣະເຈົ້າໄດ້ພາເຈົ້າອອກມາ
ຈາກແຜ່ນດິນເຢຣູຊາເລັມ.
15 ດັ່ງ ນັ້ນ, ຂ້າພະເຈົ້ານີໄຟໄດ້ພະຍາ
ຍາມຮັກສາພຣະບັນຍັດຂອງພຣະຜູ້ເປັນ
ເຈົ້າ, ແລະ ຂ້າພະເຈົ້າໄດ້ຊັກຊວນພວກ
ອ້າຍ ຂອງຂ້າພະເຈົ້າ ໃຫ້ ມີຄວາມ ຊື່ສັດ
ແລະ ຄວາມພາກພຽນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຮັດເຄື່ອງມືຈາກແຮ່ທີ່ຂ້າພະ
ເຈົ້າໄດ້ຫລອມອອກຈາກຫີນ.
17 ແລະ ເມື່ອ ພວກ ອ້າຍ ຂອງ ຂ້າ ພະ
ເຈົ້າ ເຫັນ ວ່າ ຂ້າພະເຈົ້າກຳລັງຈະ [ກ]ສ້າງ
ເຮືອຢູ່, ພວກເຂົາເລີ່ມຈົ່ມໃຫ້ຂ້າພະເຈົ້າ,
ໂດຍກ່າວວ່າ: ນ້ອງຂອງພວກເຮົາເປັນຄົນ
ໂງ່, ມັນຄິດວ່າມັນຈະສ້າງເຮືອໄດ້; ແທ້ຈິງ
ແລ້ວ, ແລະ ມັນ ຄິດ ອີກວ່າ ມັນ ສາມາດ
ຂ້າມນ້ຳກວ້າງໃຫຍ່ນີ້ໄປໄດ້.
18 ແລະ ພວກອ້າຍຂອງຂ້າພະເຈົ້າໄດ້
ຈົ່ມ ໃຫ້ຂ້າພະເຈົ້າດັ່ງນັ້ນ, ແລະ ປາດຖະ
ໜາທີ່ຈະບໍ່ເຮັດວຽກເພາະພວກເຂົາບໍ່ເຊື່ອ
ວ່າຂ້າພະເຈົ້າຈະສ້າງເຮືອໄດ້; ທັງບໍ່ເຊື່ອ
ອີກວ່າ ພຣະຜູ້ເປັນເຈົ້າໄດ້ແນະນຳຂ້າພະ
ເຈົ້າແລ້ວ.
19 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຂ້າພະເຈົ້ານີໄຟເລີ່ມເສົ້າສະຫລົດໃຈຢ່າງ
ຍິ່ງເພາະຄວາມແຂງກະດ້າງຂອງໃຈຂອງ
ພວກເຂົາ; ແລະ ບັດນີ້ເມື່ອພວກເຂົາເຫັນ
ວ່າ ຂ້າພະເຈົ້າເລີ່ມເສົ້າສະຫລົດໃຈຫລາຍ
ພວກເຂົາກໍຍິນດີໃນໃຈຢ່າງຍິ່ງ, ເຖິງຂະ
ໜາດທີ່ພວກເຂົາໄດ້ສະແດງ [ກ]ຄວາມປີຕິ
ຍິນດີໃສ່ຂ້າພະເຈົ້າໂດຍກ່າວວ່າ: ພວກ
ເຮົາຮູ້ວ່າເຈົ້າເຮັດເຮືອບໍ່ໄດ້, ເພາະພວກ
ເຮົາຮູ້ວ່າເຈົ້າຕັດສິນໃຈບໍ່ເປັນ; ດັ່ງນັ້ນ,
ເຈົ້າຈະເຮັດວຽກງານໃຫຍ່ເຊັ່ນນີ້ໃຫ້ສຳ
ເລັດບໍ່ໄດ້.
20 ແລະ ເຈົ້າ ເປັນ ຄື ກັນ ກັບ ບິດາ ຂອງ
ພວກເຮົາ, ຊຶ່ງຖືກພາໄປໂດຍ [ກ]ຄວາມຄິດ
ຝັນອັນໂງ່ຈ້າທີ່ເກີດຂຶ້ນໃນໃຈຂອງເພິ່ນ;
ແທ້ຈິງແລ້ວ, ເພິ່ນນຳພວກເຮົາອອກມາ
ຈາກແຜ່ນດິນເຢຣູຊາເລັມ ແລະ ພວກເຮົາ
ໄດ້ເລື່ອນລອຍຢູ່ໃນຖິ່ນແຫ້ງແລ້ງກັນດານ
ມາຫລາຍປີແລ້ວ; ແລະ ພວກຜູ້ຍິງຂອງ
ພວກເຮົາກໍໄດ້ເຮັດວຽກໜັກໃນຂະນະທີ່
ຖືພາ; ແລະ ພວກເຂົາໄດ້ເກີດລູກໃນຖິ່ນ
ແຫ້ງແລ້ງກັນດານ ແລະ ໄດ້ອົດທົນທຸກ
ສິ່ງທຸກຢ່າງນອກຈາກຄວາມຕາຍເທົ່ານັ້ນ;
ແລ້ວຖ້າພວກເຂົາຕາຍເສຍກ່ອນອອກ
ຈາກເຢຣູຊາເລັມກໍຄົງເປັນການດີກວ່າທີ່
ຈະຕ້ອງມາທົນກັບຄວາມທຸກເຊັ່ນນີ້.
21 ຈົ່ງເບິ່ງ, ຫລາຍປີຜ່ານມາທີ່ພວກເຮົາ
ໄດ້ອົດທົນຢູ່ໃນຖິ່ນແຫ້ງແລ້ງກັນດານ ຊຶ່ງ
ເປັນເວລາທີ່ພວກເຮົາຄວນຈະຊື່ນຊົມຢູ່
ກັບຊັບສົມບັດຂອງພວກເຮົາ ແລະ ແຜ່ນ
ດິນຊຶ່ງເປັນມູນມໍລະດົກຂອງພວກເຮົາ; ແທ້
ຈິງແລ້ວ, ແລະ ພວກເຮົາຄວນຈະມີຄວາມ
ສຸກ.
22 ແລະ ພວກເຮົາຮູ້ວ່າ ຜູ້ຄົນທີ່ຢູ່ໃນ

13 ຂ 1 ນຟ 2:20; ຢຄ 2:12.
ຄ ອພຍ 6:7.
14 ກ 2 ນຟ 1:4.
ຄມພ ປະຈັກພະຍານ.
ຂ ຄພ 5:2.
17 ກ 1 ນຟ 18:1–6.
19 ກ ຄມພ ຂົມເຫັງ, ການຂົມເຫັງ.
20 ກ 1 ນຟ 2:11.

ແຜ່ນດິນເຢຣູຊາເລັມເປັນຄົນ [ກ]ຊອບທຳ;
ເພາະພວກເຂົາໄດ້ຮັກສາຂໍ້ກຳນົດ ແລະ
ການພິພາກສາຂອງພຣະຜູ້ເປັນເຈົ້າ ແລະ
ພຣະບັນຍັດທຸກປະການຂອງພຣະອົງຕາມ
ກົດຂອງໂມເຊ; ດັ່ງນັ້ນ, ພວກເຮົາຈຶ່ງຮູ້ວ່າ
ພວກເຂົາເປັນຄົນຊອບທຳ; ແລະ ພວກ
ເຂົາຖືກຕັດສິນໂດຍບິດາຂອງພວກເຮົາ
ແລະ ພວກເຮົາອອກມາເພາະພວກເຮົາ
ເຊື່ອຟັງຄຳຂອງເພິ່ນ; ແທ້ຈິງແລ້ວ, ແລະ
ນ້ອງຊາຍຂອງພວກເຮົາກໍເປັນຄືກັນກັບ
ເພິ່ນ. ແລະ ພວກອ້າຍຂອງຂ້າພະເຈົ້າໄດ້
ຈົ່ມ ແລະ ຕໍ່ວ່າຕໍ່ຂານພວກເຮົາໂດຍໃຊ້ພາ
ສາຢ່າງນີ້.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເວົ້າກັບພວກເຂົາ, ມີຄວາມ
ວ່າ: ພວກເຈົ້າເຊື່ອບໍ່ວ່າ ບັນພະບຸລຸດຂອງ
ພວກເຮົາຜູ້ເປັນລູກຫລານຂອງອິດສະ
ຣາເອນ ຈະຖືກນຳພາໄປໃຫ້ພົ້ນຈາກກຳມື
ຂອງຊາວເອຢິບບໍ່ໄດ້ຖ້າຫາກພວກເຂົາບໍ່
ເຊື່ອຟັງພຣະຄຳຂອງພຣະຜູ້ເປັນເຈົ້າ?

24 ແທ້ຈິງແລ້ວ, ພວກເຈົ້າຄິດບໍ່ວ່າ ພວກ
ເຂົາຈະຖືກນຳໄປໃຫ້ພົ້ນຈາກຄວາມເປັນ
ທາດບໍ່ໄດ້ ຖ້າຫາກພຣະຜູ້ເປັນເຈົ້າບໍ່ບັນ
ຊາໂມເຊໃຫ້ [ກ]ນຳພວກເຂົາໄປໃຫ້ພົ້ນຈາກ
ຄວາມເປັນທາດ?

25 ບັດນີ້ພວກເຈົ້າຮູ້ວ່າ ລູກຫລານຂອງ
ອິດສະຣາເອນເຄີຍ [ກ]ເປັນທາດມາແລ້ວ;
ແລະ ພວກເຈົ້າຮູ້ວ່າ ພວກເຂົາຕ້ອງເຮັດ
[ຂ]ວຽກໜັກ ຊຶ່ງເປັນພາລະເຫລືອທີ່ຈະທົນ
ໄດ້; ດັ່ງນັ້ນ, ພວກເຈົ້າຮູ້ວ່າພວກເຂົາຖືກ
ນຳໄປໃຫ້ພົ້ນຈາກຄວາມເປັນທາດຍ່ອມ
ຕ້ອງເປັນການດີສຳລັບພວກເຂົາ.

26 ບັດນີ້ພວກເຈົ້າຮູ້ວ່າ ພຣະຜູ້ເປັນເຈົ້າ
ໄດ້ບັນຊາໃຫ້ [ກ]ໂມເຊເຮັດວຽກທີ່ຍິ່ງໃຫຍ່
ນັ້ນ; ແລະ ພວກເຈົ້າຮູ້ວ່າ ດ້ວຍ [ຂ]ຄຳເວົ້າ
ຂອງເພິ່ນນ້ຳໃນທະເລແດງຈຶ່ງແຍກອອກ
ໄປທາງນັ້ນທາງນີ້, ແລະ ພວກເຂົາຈຶ່ງເດີນ
ຜ່ານໄປໄດ້ເທິງແຜ່ນດິນແຫ້ງ.

27 ແລະ ພວກເຈົ້າຮູ້ວ່າຊາວເອຢິບຊຶ່ງ
ເປັນກອງທັບຂອງຟາຣາໂອໄດ້ຈົມຢູ່ໃນນ້ຳ
ທະເລແດງນັ້ນ.

28 ແລະ ພວກເຈົ້າຮູ້ອີກວ່າພວກເຂົາຖືກ
ລ້ຽງດູດ້ວຍ [ກ]ມານາຢູ່ໃນຖິ່ນແຫ້ງແລ້ງກັນ
ດານ.

29 ແທ້ຈິງແລ້ວ, ແລະ ພວກເຈົ້າຮູ້ອີກວ່າ
ດ້ວຍຄຳເວົ້າຂອງໂມເຊຕາມອຳນາດຂອງ
ພຣະເຈົ້າຊຶ່ງຢູ່ກັບເພິ່ນ, ເພິ່ນ [ກ]ຕີຫີນ ແລະ
ນ້ຳໄດ້ໄຫລອອກມາເພື່ອລູກຫລານອິດສະ
ຣາເອນຈະໄດ້ດື່ມແກ້ຄວາມຫິວກະຫາຍ.

30 ແລະ ທັງທີ່ພວກເຂົາຖືກນຳໄປ ພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ,
ພຣະຜູ້ໄຖ່ຂອງພວກເຂົາຍັງສະເດັດໄປ
ທາງໜ້າພວກເຂົາ ໂດຍນຳພວກເຂົາໄປ
ໃນຕອນກາງເວັນ ແລະ ປະທານແສງສະ
ຫວ່າງໃຫ້ພວກເຂົາໃນຕອນກາງຄືນ, ແລະ
ເຮັດທຸກສິ່ງທຸກຢ່າງໃຫ້ແກ່ພວກເຂົາ ຊຶ່ງ
[ກ]ຕາມແບບມະນຸດຈະໄດ້ຮັບ, ພວກເຂົາຍັງ
ເຮັດໃຈແຂງກະດ້າງ ແລະ ເຮັດຈິດໃຈມືດ

22 ກ 1 ນຟ 1:13.
24 ກ ອພຍ 3:2–10;
1 ນຟ 19:10;
2 ນຟ 3:9; 25:20.
25 ກ ປຖກ 15:13–14.
ຂ ອພຍ 1:11; 2:11.
26 ກ ກຈກ 7:22–39.
ຂ ອພຍ 14:21–31;
1 ນຟ 4:2;
ມຊຢ 7:19;
ຣລມ 8:11;
ຄພ 8:3;
ມຊ 1:25.
28 ກ ອພຍ 16:4, 14–15, 35;
ຈບຊ 11:7–8;
ພບຍ 8:3;
ມຊຢ 7:19.
29 ກ ອພຍ 17:6;
ຈບຊ 20:11;
ພບຍ 8:15;
1 ນຟ 20:21.
30 ກ ຄພ 18:18; 88:64–65.

ມົນ ແລະ ຂໝິ່ນປະໝາດໂມເຊ ແລະ ພຣະ
ເຈົ້າອົງທ່ຽງແທ້ ແລະ ຊົງພຣະຊົນຢູ່.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະອົງໄດ້ ກທຳລາຍພວກເຂົາຕາມພຣະ
ຄຳຂອງພຣະອົງ ແລະ ຕາມພຣະຄຳຂອງ
ພຣະອົງໄດ້ ຂນຳພາພວກເຂົາ ແລະ ຕາມ
ຄຳຂອງພຣະອົງໄດ້ກະທຳທຸກສິ່ງທຸກຢ່າງ
ເພື່ອພວກເຂົາ; ແລະ ບໍ່ມີຫຍັງເປັນໄປ
ນອກຈາກຕາມພຣະຄຳຂອງພຣະອົງ.
32 ແລະ ຫລັງຈາກພວກເຂົາຂ້າມແມ່ນ້ຳ
ຈໍແດນແລ້ວ ພຣະອົງໄດ້ເຮັດໃຫ້ພວກເຂົາ
ຍິ່ງໃຫຍ່ຈົນໄດ້ ກຂັບໄລ່ລູກຫລານຂອງ
ແຜ່ນດິນໄປ, ແທ້ຈິງແລ້ວ, ຈົນພວກນັ້ນກະ
ຈັດກະຈາຍໄປສູ່ຄວາມພິນາດ.
33 ແລະ ບັດນີ້, ພວກເຈົ້າຄິດບໍ່ວ່າລູກ
ຫລານຂອງແຜ່ນດິນນີ້ ຊຶ່ງຢູ່ໃນແຜ່ນດິນ
ແຫ່ງຄຳສັນຍາ ຊຶ່ງບັນພະບຸລຸດຂອງພວກ
ເຂົາຂັບໄລ່ໄປ, ພວກເຈົ້າຄິດບໍ່ວ່າພວກ
ເຂົາເປັນຄົນຊອບທຳ? ຈົ່ງເບິ່ງ, ເຮົາເວົ້າ
ກັບພວກເຈົ້າວ່າ, ບໍ່ເລີຍ.
34 ພວກເຈົ້າຄິດບໍ່ວ່າບັນພະບຸລຸດຂອງ
ພວກເຮົາຈະເປັນທີ່ໂປດປານຫລາຍກວ່າ
ພວກເຂົາ ຖ້າຫາກພວກເຂົາເປັນຄົນຊອບ
ທຳ? ເຮົາກ່າວກັບພວກເຈົ້າວ່າ, ບໍ່ເລີຍ.
35 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າຖືວ່າ ກເນື້ອ
ໜັງທັງຫລາຍເປັນອັນດຽວ; ຄົນທີ່ ຂຊອບ
ທຳຍ່ອມເປັນ ຄທີ່ໂປດປານຂອງພຣະເຈົ້າ.
ແຕ່ຈົ່ງເບິ່ງ, ຜູ້ຄົນພວກນີ້ປະຕິເສດພຣະ
ຄຳຂອງພຣະເຈົ້າທຸກຂໍ້ຄວາມ; ແລະ ພວກ
ເຂົາສຸກໃນຄວາມຊົ່ວຮ້າຍ ແລະ ຄວາມບໍລິ
ບູນແຫ່ງພຣະພິໂລດຂອງພຣະເຈົ້າຢູ່ເໜືອ
ພວກເຂົາແລ້ວ, ແລະ ພຣະຜູ້ເປັນເຈົ້າໄດ້
ສາບແຊ່ງແຜ່ນດິນສຳລັບພວກເຂົາ ແລະ
ປະທານມັນໃຫ້ແກ່ບັນພະບຸລຸດຂອງພວກ
ເຮົາ; ແທ້ຈິງແລ້ວ, ພຣະອົງໄດ້ສາບແຊ່ງ
ມັນສຳລັບພວກເຂົາຈົນເຖິງຄວາມພິນາດ
ຂອງພວກເຂົາ, ແລະ ພຣະອົງໄດ້ປະທານ
ມັນໃຫ້ແກ່ບັນພະບຸລຸດຂອງພວກເຮົາຈົນ
ເຖິງການມີອຳນາດເໜືອກວ່າມັນ.
36 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າ ກໄດ້ສ້າງ
ຂໂລກເພື່ອໃຫ້ເປັນ ຄທີ່ຢູ່ອາໄສ; ແລະ
ພຣະອົງໄດ້ສ້າງລູກຂອງພຣະອົງເພື່ອ
ພວກເຂົາຈະໄດ້ເປັນເຈົ້າຂອງມັນ.
37 ແລະ ພຣະອົງໄດ້ ກຍົກປະຊາຊາດ
ທີ່ຊອບທຳຂຶ້ນ ແລະ ທຳລາຍປະຊາຊາດ
ຂອງຄົນຊົ່ວ.
38 ແລະ ພຣະອົງໄດ້ນຳຄົນຊອບທຳໄປ
ຫາ ກແຜ່ນດິນທີ່ມີຄ່າ, ແລະ ພຣະອົງໄດ້
ຂທຳລາຍຄົນຊົ່ວ, ແລະ ສາບແຊ່ງແຜ່ນດິນ
ສຳລັບຄົນຊົ່ວເພື່ອເຫັນແກ່ພວກເຂົາ.
39 ພຣະອົງໄດ້ປົກຄອງຢູ່ສູງໃນຟ້າ
ສະຫວັນ, ເພາະບ່ອນນັ້ນຄືພຣະທີ່ນັ່ງຂອງ
ພຣະອົງ, ແລະ ແຜ່ນດິນໂລກນີ້ຄື ກທີ່ຮອງ
ພຣະບາດຂອງພຣະອົງ.

30 *ຂ* ອພຍ 32:8; ຈບຊ 14:2–3; ອຊກ 20:13–16; ຄພ 84:23–25.
31 *ກ* ຈບຊ 26:65.
*ຂ* 1 ນຟ 5:15; ຄພ 103:16–18.
32 *ກ* ຈບຊ 33:52–53; ຢຊ 24:8.
35 *ກ* ກຈກ 10:15, 34; ຣມ 2:11; 2 ນຟ 26:23–33.
*ຂ* ພສສ 55:22; 1 ນຟ 22:17.
*ຄ* 1 ຊມອ 2:30; ພສສ 97:10; 145:20; ແອວ 13:4; ຄພ 82:10.
36 *ກ* ຄນພ ສ້າງ, ການສ້າງ.
*ຂ* ຄນພ ແຜ່ນດິນໂລກ.
*ຄ* ອຊຢ 45:18; ອຣຮ 3:24–25.
37 *ກ* ສພສ 14:34; 1 ນຟ 4:13; ອທ 2:10; ຄພ 117:6.
38 *ກ* ຄນພ ແຜ່ນດິນ ແຫ່ງຄຳສັນຍາ.
*ຂ* ລລວ 20:22.
39 *ກ* ອຊຢ 66:1; ຄພ 38:17; ອຣຮ 2:7.

40 ແລະ ພຣະອົງຮັກຜູ້ທີ່ຮັບຮູ້ພຣະອົງ
ເປັນພຣະເຈົ້າຂອງພວກເຂົາ. ຈົ່ງເບິ່ງ,
ພຣະອົງຮັກບັນພະບຸລຸດຂອງພວກເຂົາ,
ແລະ ພຣະອົງເຮັດ ກພັນທະສັນຍາໄວ້ກັບ
ພວກເຂົາ, ແທ້ຈິງແລ້ວ, ເຖິງແມ່ນກັບອັບ
ຣາຮາມ, ຂອີຊາກ, ແລະ ຄຢາໂຄບ; ແລະ
ພຣະອົງຈື່ຈຳພັນທະສັນຍາທີ່ໄດ້ກະທຳໄວ້;
ດັ່ງນັ້ນ, ພຣະອົງຈຶ່ງໄດ້ນຳພວກເຂົາອອກ
ຈາກແຜ່ນດິນ ງເອຢິບ.
41 ແລະ ພຣະອົງໄດ້ຕີສອນພວກເຂົາ
ດ້ວຍໄມ້ແສ້ຂອງພຣະອົງໃນຖິ່ນແຫ້ງແລ້ງ
ກັນດານ ເພາະພວກເຂົາເຮັດ ກໃຈແຂງກະ
ດ້າງເຖິງແມ່ນດັ່ງທີ່ພວກເຈົ້າເຮັດຢູ່; ແລະ
ພຣະຜູ້ເປັນເຈົ້າໄດ້ຕີສອນພວກເຂົາເພາະ
ຄວາມຊົ່ວຮ້າຍຂອງພວກເຂົາ. ພຣະອົງໄດ້
ສົ່ງ ຂງູພິດບິນພົ່ນໄຟລົງມາເທິງບັນດາພວກ
ເຂົາ; ແລະ ຫລັງຈາກຖືກງູຕອດແລ້ວ ພຣະ
ອົງໄດ້ຕຽມທາງໄວ້ເພື່ອພວກເຂົາຈະໄດ້ຮັບ
ຄການປິ່ນປົວ; ແລະ ວຽກທີ່ພວກເຂົາຕ້ອງ
ເຮັດຄືຫລຽວເບິ່ງ; ແລະ ເພາະຄວາມ ງລຽບ
ຂອງທາງ, ຫລື ຄວາມງ່າຍດາຍຂອງມັນ,
ຈຶ່ງມີຄົນຕາຍເປັນຈຳນວນຫລວງຫລາຍ.
42 ແລະ ພວກເຂົາໄດ້ເຮັດໃຈແຂງກະ
ດ້າງເປັນບາງຄັ້ງ, ແລະ ພວກເຂົາໄດ້ ກໝິ່ນ
ປະໝາດ ຂໂມເຊກັບພຣະເຈົ້ານຳອີກ; ເຖິງ
ຢ່າງໃດກໍຕາມ, ພວກເຈົ້າຍັງຮູ້ວ່າພວກເຂົາ
ຖືກນຳອອກມາຫາແຜ່ນດິນແຫ່ງຄຳສັນຍາ
ໂດຍອຳນາດອັນຫາທີ່ປຽບບໍ່ໄດ້ຂອງພຣະ
ອົງ.
43 ແລະ ບັດນີ້, ຫລັງຈາກເຫດການທັງ
ໝົດ ນີ້ແລ້ວ, ເວລາຈະມາເຖິງເມື່ອພວກ
ເຂົາກັບເປັນຄົນຊົ່ວ, ແທ້ຈິງແລ້ວ, ເກືອບ
ສຸກ; ແລະ ເຮົາກໍບໍ່ຮູ້ແຕ່ທຸກວັນນີ້ພວກເຂົາ
ໃກ້ຈະຖືກທຳລາຍແລ້ວ; ເພາະເຮົາຮູ້ວ່າ
ວັນນັ້ນຕ້ອງມາເຖິງແນ່ນອນທີ່ພວກເຂົາ
ຈະຕ້ອງຖືກທຳລາຍ, ນອກຈາກບໍ່ເທົ່າໃດ
ຄົນຊຶ່ງຈະຖືກນຳໄປສູ່ການເປັນຊະເລີຍ.
44 ດັ່ງນັ້ນ, ພຣະຜູ້ເປັນເຈົ້າຈຶ່ງ ກບັນຊາ
ບິດາຂອງເຮົາວ່າເພິ່ນຄວນອອກມາໃນຖິ່ນ
ແຫ້ງແລ້ງກັນດານ ແລະ ຊາວຢິວກໍພະຍາ
ຍາມທີ່ຈະເອົາຊີວິດຂອງເພິ່ນນຳອີກ; ແທ້
ຈິງແລ້ວ, ແລະ ຂພວກເຈົ້າກໍພະຍາຍາມທີ່
ຈະເອົາຊີວິດຂອງເພິ່ນເໝືອນກັນ; ດັ່ງນັ້ນ,
ພວກເຈົ້າຈຶ່ງມີໃຈເປັນຄາດຕະກອນ ແລະ
ພວກເຈົ້າກໍປຽບເໝືອນດັ່ງຄົນພວກນັ້ນ.
45 ພວກເຈົ້າ ກວ່ອງໄວທີ່ສຸດໃນການ
ເຮັດຄວາມຊົ່ວຮ້າຍ ແຕ່ຊັກຊ້າທີ່ຈະລະນຶກ
ເຖິງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຈົ້າ. ພວກເຈົ້າໄດ້ເຫັນ ຂທູດແລ້ວ,
ແລະ ເພິ່ນໄດ້ກ່າວກັບພວກເຈົ້າ; ແທ້ຈິງ
ແລ້ວ, ພວກເຈົ້າໄດ້ຍິນສຸລະສຽງຂອງພຣະ
ອົງເປັນບາງຄັ້ງ; ແລະ ພຣະອົງໄດ້ຮັບສັ່ງ
ກັບພວກເຈົ້າດ້ວຍສຽງອັນເບົາໆ, ແຕ່ພວກ
ເຈົ້າມີ ຄໃຈແຂງເກີນກວ່າທີ່ຈະຮູ້ສຶກ, ພວກ
ເຈົ້າຈຶ່ງຮູ້ສຶກໃນພຣະຄຳຂອງພຣະອົງບໍ່
ໄດ້; ດັ່ງນັ້ນ, ພຣະອົງຈຶ່ງຮັບສັ່ງກັບພວກ
ເຈົ້າດ້ວຍສຽງເໝືອນຟ້າຮ້ອງ ຊຶ່ງໄດ້ເຮັດ
ໃຫ້ແຜ່ນດິນສັ່ນສະເທືອນເໝືອນກັບວ່າ

40 ກ ຄມພ ພັນທະສັນຍາ ຂອງອັບຣາຮາມ.
ຂ ປຖກ 21:12; ຄພ 27:10.
ຄ ປຖກ 28:1–5.
ງ ພບຍ 4:37.
41 ກ 2 ກສ 17:7–23.
ຂ ຈບຊ 21:4–9; ພບຍ 8:15; ແອວ 33:18–22.
ຄ ຢຮ 3:13–15; 2 ນຟ 25:20.
ງ ແອວ 37:44–47; ຮລມ 8:15.
42 ກ ຈບຊ 14:1–12. ຄມພ ກະບົດ, ການກະບົດ.
ຂ ຄພ 84:23–24.
44 ກ 1 ນຟ 2:1–2.
ຂ 1 ນຟ 16:37.
45 ກ ມຊຢ 13:29.
ຂ 1 ນຟ 4:3.
ຄ ອຟຊ 4:19.

ຈະແຍກອອກຈາກກັນ.
46 ແລະ ພວກ ເຈົ້າ ຮູ້ ອີກ ວ່າ ໂດຍ
[ກ]ອຳນາດແຫ່ງຄຳທີ່ຊົງລິດອຳນາດຍິ່ງໃຫຍ່
ຂອງພຣະອົງ, ພຣະອົງໄດ້ເຮັດໃຫ້ໂລກສູນ
ສິ້ນໄປໄດ້; ແທ້ຈິງແລ້ວ, ແລະ ພວກເຈົ້າຮູ້
ວ່າ ໂດຍພຣະຄຳຂອງພຣະອົງ, ພຣະອົງ
ໄດ້ເຮັດໃຫ້ບ່ອນຫລຸບໂນນກາຍເປັນບ່ອນ
ຮາບພຽງໄດ້, ແລະ ເຮັດໃຫ້ບ່ອນຮາບພຽງ
ແຕກຄຸຄະໄດ້. ໂອ້, ແລ້ວດ້ວຍເຫດໃດ
ພວກເຈົ້າຈຶ່ງມີໃຈແຂງກະດ້າງເຊັ່ນນັ້ນໄດ້?
47 ຈົ່ງເບິ່ງ, ຈິດວິນຍານຂອງເຮົາສີກ
ຂາດດ້ວຍຄວາມເຈັບປວດເພາະພວກ
ເຈົ້າ, ແລະ ໃຈຂອງເຮົາເຈັບປວດເພາະເຮົາ
ຢ້ານວ່າ ພວກເຈົ້າຈະຖືກປະຖິ້ມຕະຫລອດ
ການ; ຈົ່ງເບິ່ງ, ເຮົາ [ກ]ເຕັມໄປດ້ວຍພຣະວິນ
ຍານຂອງພຣະເຈົ້າ, ເຖິງຂະໜາດທີ່ຮ່າງ
ກາຍຂອງເຮົາ [ຂ]ໝົດກຳລັງ.
48 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອຂ້າພະເຈົ້າໄດ້ເວົ້າຂໍ້ຄວາມນີ້ແລ້ວ
ພວກເຂົາກໍໃຈຮ້າຍໃຫ້ຂ້າພະເຈົ້າ ແລະ
ປາດຖະໜາທີ່ຈະໂຍນຂ້າພະເຈົ້າລົງໄປ
ໃນຄວາມເລິກຂອງທະເລ; ແລະ ເມື່ອ
ພວກເຂົາເຂົ້າມາຫວັງທີ່ຈະຈັບຂ້າພະເຈົ້າ,
ຂ້າພະເຈົ້າໄດ້ເວົ້າກັບພວກເຂົາ, ມີຄວາມ
ວ່າ: ໃນພຣະນາມຂອງພຣະເຈົ້າ ຜູ້ຊົງລິດ
ອຳນາດຍິ່ງໃຫຍ່, ເຮົາບັນຊາພວກເຈົ້າ
ວ່າ ຢ່າໄດ້ [ກ]ແຕະຕ້ອງເຮົາເປັນເດັດຂາດ
ເພາະເຮົາເຕັມໄປດ້ວຍ [ຂ]ອຳນາດຂອງ
ພຣະເຈົ້າເຖິງຂະໜາດເກືອບຈະໄໝ້ເນື້ອ
ໜັງຂອງເຮົາ ແລະ ຜູ້ໃດທີ່ເອົາມືມາແຕະ
ຕ້ອງເຮົາ ຜູ້ນັ້ນຈະ [ຄ]ຫ່ຽວແຫ້ງໄປຄືກັນ
ກັບຕົ້ນອໍ້ແຫ້ງ; ແລະ ຜູ້ນັ້ນຈະສູນສິ້ນໄປຕໍ່
ອຳນາດຂອງພຣະເຈົ້າ ເພາະພຣະເຈົ້າຈະ
ລົງທັນຜູ້ນັ້ນ.
49 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເວົ້າກັບພວກເຂົາວ່າ ບໍ່ໃຫ້
ຈົ່ມໃຫ້ບິດາຂອງພວກເຂົາອີກຕໍ່ໄປ; ທັງຈະ
ບໍ່ປະຕິເສດວຽກງານທີ່ຂ້າພະເຈົ້າໃຫ້ເຮັດ,
ເພາະວ່າພຣະເຈົ້າໄດ້ບັນຊາຂ້າພະເຈົ້າໃຫ້
ສ້າງເຮືອລຳໜຶ່ງ.
50 ແລະ ຂ້າພະເຈົ້າໄດ້ເວົ້າກັບພວກເຂົາ
ວ່າ: [ກ]ຖ້າຫາກພຣະເຈົ້າບັນຊາຂ້າພະເຈົ້າ
ໃຫ້ເຮັດສິ່ງໃດກໍຕາມ ຂ້າພະເຈົ້າຍ່ອມເຮັດ
ໄດ້ ຖ້າຫາກພຣະອົງໄດ້ບັນຊາຂ້າພະເຈົ້າ
ໃຫ້ເວົ້າກັບນ້ຳນີ້ວ່າ ຈົ່ງເປັນແຜ່ນດິນ ມັນ
ກໍຈະເປັນແຜ່ນດິນ, ແລະ ຖ້າຫາກ ຂ້າພະ
ເຈົ້າຈະກ່າວແນວໃດ ມັນຈະເປັນໄປຕາມ
ນັ້ນ.
51 ແລະ ບັດນີ້, ຖ້າຫາກພຣະຜູ້ເປັນເຈົ້າ
ມີອຳນາດຍິ່ງໃຫຍ່ເຊັ່ນນັ້ນ, ແລະ ໄດ້ກະ
ທຳສິ່ງມະຫັດສະຈັນຫລາຍຕໍ່ຫລາຍຢ່າງ
ໃນບັນດາລູກຫລານມະນຸດ, ແລ້ວເປັນ
ຫຍັງພຣະອົງຈະ [ກ]ແນະນຳຂ້າພະເຈົ້າໃຫ້
ສ້າງເຮືອລຳໜຶ່ງບໍ່ໄດ້?
52 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ເວົ້າຫລາຍເລື່ອງກັບພວກ
ອ້າຍຂອງຂ້າພະເຈົ້າ, ເຖິງຂະໜາດທີ່ພວກ
ເຂົາອັບອາຍ ແລະ ໂຕ້ຕອບຂ້າພະເຈົ້າບໍ່
ໄດ້ ທັງບໍ່ກ້າຈັບຂ້າພະເຈົ້າ ຫລື ແຕະຕ້ອງ
ຂ້າພະເຈົ້າດ້ວຍນິ້ວມືເລີຍ, ເຖິງແມ່ນເປັນ
ເວລາຫລາຍມື້ແລ້ວພວກເຂົາກໍຍັງບໍ່ກ້າ
ເຮັດຢ່າງນັ້ນ ເພາະຢ້ານວ່າຕົນຈະຫ່ຽວ
ແຫ້ງໄປຕໍ່ໜ້າຂ້າພະເຈົ້າ. [ກ]ພຣະວິນຍານ
ຂອງພຣະເຈົ້າມີອຳນາດເຊັ່ນນັ້ນ ແລະ ໄດ້

46 *ກ* ຣລມ 12:6–18.
47 *ກ* ມກ 3:8.
*ຂ* 1 ນຟ 19:20.
48 *ກ* ມຊຢ 13:3.
*ຂ* 2 ນຟ 1:26–27.
ຄມພ ອຳນາດ.
*ຄ* 1 ກສ 13:4–7.
50 *ກ* ຟລປ 4:13;
1 ນຟ 3:7.
51 *ກ* ປຖກ 6:14–16;
1 ນຟ 18:1.
52 *ກ* ຄມພ ພຣະວິນຍານບໍລິສຸດ.

ກະທຳກັບພວກເຂົາດັ່ງນັ້ນ.
53 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະ ຜູ້ເປັນ ເຈົ້າກ່າວ ກັບ ຂ້າພະ ເຈົ້າວ່າ:
ຢຽດມືຊີ້ອອກໄປຫາພວກອ້າຍຂອງເຈົ້າ
ອີກ, ແລະ ພວກເຂົາຈະບໍ່ຫ່ຽວແຫ້ງໄປຕໍ່
ໜ້າເຈົ້າ, ແຕ່ເຮົາຈະເຮັດໃຫ້ພວກເຂົາສະ
ດຸ້ງຕື່ນ, ພຣະຜູ້ເປັນເຈົ້າໄດ້ກ່າວ, ແລະ
ເຮົາຈະກະທຳການນີ້ເພື່ອພວກເຂົາຈະໄດ້
ຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ.
54 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເດ່ມືອອກໄປຫາພວກອ້າຍຂອງ
ຂ້າພະເຈົ້າ, ແລະ ພວກເຂົາບໍ່ໄດ້ຫ່ຽວແຫ້ງ
ໄປຕໍ່ໜ້າຂ້າພະເຈົ້າ, ແຕ່ພຣະຜູ້ເປັນເຈົ້າ
ໄດ້ເຮັດໃຫ້ພວກເຂົາຕົວສັ່ນເຖິງແມ່ນເປັນ
ດັ່ງພຣະຄຳທີ່ພຣະຜູ້ເປັນເຈົ້າຮັບສັ່ງໄວ້.
55 ແລະ ບັດນີ້, ພວກເຂົາໄດ້ເວົ້າວ່າ:
ພວກເຮົາຮູ້ເຖິງຄວາມແນ່ນອນວ່າ ພຣະຜູ້
ເປັນເຈົ້າສະຖິດຢູ່ກັບເຈົ້າ, ເພາະວ່າພວກ
ເຮົາຮູ້ວ່າ ມັນເປັນອຳນາດຂອງພຣະຜູ້
ເປັນເຈົ້າທີ່ເຮັດໃຫ້ຕົວພວກເຮົາສັ່ນ. ແລະ
ພວກເຂົາຊຸດຕົວລົງຕໍ່ໜ້າຂ້າພະເຈົ້າ ແລະ
ກຳລັງຈະ [ກ]ກາບໄຫວ້ຂ້າພະເຈົ້າ, ແຕ່ຂ້າ
ພະເຈົ້າບໍ່ຍອມໃຫ້ພວກເຂົາເຮັດ, ໂດຍ
ກ່າວວ່າ: ເຮົາເປັນນ້ອງຂອງພວກເຈົ້າ, ແທ້
ຈິງແລ້ວ, ແມ່ນເປັນນ້ອງຊາຍຂອງພວກ
ເຈົ້າ; ດັ່ງນັ້ນ, ຈົ່ງນະມັດສະການພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ
ພຸ້ນ, ແລະ ຈົ່ງນັບຖືບິດາມານດາຂອງພວກ
ເຈົ້າເພື່ອ [ຂ]ວັນເວລາຂອງພວກເຈົ້າຈະຍືນ
ຍົງຢູ່ໃນແຜ່ນດິນ ຊຶ່ງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຈົ້າຈະປະທານ
ໃຫ້.

## ບົດທີ 18

*ເຮືອໄດ້ສຳເລັດ—ການເກີດຂອງຢາໂຄບ ແລະ ໂຢເຊັບໄດ້ເວົ້າເຖິງ—ຄອບຄົວເລີ່ມອອກເດີນທາງໄປຫາແຜ່ນດິນແຫ່ງຄຳສັນຍາ—ລູກຊາຍຂອງອິດຊະມາເອນ ແລະ ພວກເມຍຂອງພວກເຂົາເຂົ້າຮ່ວມການສະໜຸກສະໜານ ແລະ ກໍ່ການກະບົດ—ນີໄຟຖືກມັດ ແລະ ເຮືອໄດ້ຖືກພັດກັບຄືນດ້ວຍພະຍຸຝົນຟ້າຄະນອງທີ່ຮ້າຍແຮງ—ນີໄຟໄດ້ຮັບການປົດປ່ອຍ ແລະ ໂດຍການອະທິຖານຂອງເພິ່ນລົມພະຍຸໄດ້ຢຸດລົງ—ຜູ້ຄົນມາເຖິງແຜ່ນດິນແຫ່ງຄຳສັນຍາ. ປະມານ 591–589 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ນະມັດສະການພຣະຜູ້ເປັນເຈົ້າ
ແລະ ໄດ້ອອກໄປກັບຂ້າພະເຈົ້າ; ແລະ
ພວກເຮົາໄດ້ເຮັດວຽກດ້ວຍຝີມືອັນແປກ
ປະຫລາດ. ແລະ ພຣະຜູ້ເປັນເຈົ້າໄດ້
ສະແດງໃຫ້ຂ້າພະເຈົ້າເຫັນເປັນບາງຄັ້ງວ່າ
ຄວນສ່ຽນໄມ້ວິທີໃດເພື່ອຈະສ້າງເຮືອໄດ້.
2 ບັດນີ້ຂ້າພະເຈົ້ານີໄຟບໍ່ໄດ້ເຮັດວຽກໄມ້
ຕາມວິທີທີ່ມະນຸດຮຽນຮູ້ກັນ, ທັງບໍ່ໄດ້ສ້າງ
ເຮືອຕາມວິທີຂອງມະນຸດ, ແຕ່ຂ້າພະເຈົ້າ
ໄດ້ສ້າງເຮືອຕາມວິທີທີ່ພຣະຜູ້ເປັນເຈົ້າໄດ້
ສະແດງແກ່ຂ້າພະເຈົ້າ; ດັ່ງນັ້ນ ຈຶ່ງບໍ່ເປັນ
ໄປຕາມວິທີຂອງມະນຸດ.
3 ແລະ ຂ້າພະເຈົ້ານີໄຟໄດ້ຂຶ້ນໄປເທິງ
ພູເລື້ອຍໆເພື່ອ [ກ]ອະທິຖານຫາພຣະຜູ້ເປັນ
ເຈົ້າ; ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງ [ຂ]ສະແດງ
ສິ່ງທີ່ຍິ່ງໃຫຍ່ແກ່ຂ້າພະເຈົ້າ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ຂ້າພະເຈົ້າໄດ້ສ້າງເຮືອສຳເລັດ

55 *ກ* ກຈກ 14:11–15.
*ຂ* ອພຍ 20:12; ມຊຢ 13:20.

**18** 3 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄມພ ເປີດເຜີຍ, ການເປີດເຜີຍ.

ຕາມພຣະຄຳຂອງພຣະຜູ້ເປັນເຈົ້າແລ້ວ,
ພວກອ້າຍຂອງຂ້າພະເຈົ້າຈຶ່ງເຫັນວ່າມັນດີ
ຫລາຍ ແລະ ຝີມືຂອງການສ້າງນັ້ນດີເລີດ;
ດັ່ງນັ້ນ, ພວກເຂົາຈຶ່ງ [ກ]ຖ່ອມຕົວລົງຕໍ່ພຣະ
ພັກຂອງພຣະຜູ້ເປັນເຈົ້າອີກ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຸລະ
ສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງບິດາ
ຂອງຂ້າພະເຈົ້າ, ວ່າພວກເຮົາຄວນລຸກຂຶ້ນ
ແລະ ລົງໄປໃນເຮືອ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ, ຫລັງຈາກພວກເຮົາຕຽມເຄື່ອງ
ຂອງທັງໝົດ, ມີໝາກໄມ້ ແລະ [ກ]ຊີ້ນຈາກ
ຖິ່ນແຫ້ງແລ້ງກັນດານ, ແລະ ນ້ຳເຜີ້ງເປັນ
ຈຳນວນຫລວງຫລາຍກັບສະບຽງອາຫານ
ຕາມທີ່ພຣະຜູ້ເປັນເຈົ້າບັນຊາພວກເຮົາ
ໄວ້, ພວກເຮົາໄດ້ລົງໄປໃນເຮືອພ້ອມດ້ວຍ
ເຄື່ອງບັນທຸກຂອງພວກເຮົາທຸກຢ່າງ, ແລະ
ເມັດພືດຂອງພວກເຮົາ, ແລະ ເຄື່ອງຂອງ
ຕ່າງໆທີ່ພວກເຮົານຳມາ, ແຕ່ລະຄົນຕາມ
ອາຍຸຂອງຕົນ; ດັ່ງນັ້ນ, ພວກເຮົາທຸກຄົນຈຶ່ງ
ໄດ້ລົງໄປໃນເຮືອພ້ອມທັງເມຍຂອງພວກ
ເຮົາ ແລະ ລູກຂອງພວກເຮົາ.

7 ແລະ ບັດນີ້, ບິດາຂອງຂ້າພະເຈົ້າໄດ້
ມີລູກຕື່ມອີກສອງຄົນໃນຖິ່ນແຫ້ງແລ້ງກັນ
ດານ; ຜູ້ເປັນອ້າຍມີຊື່ວ່າ [ກ]ຢາໂຄບ ແລະ ຜູ້
ເປັນນ້ອງມີຊື່ວ່າ [ຂ]ໂຢເຊັບ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກພວກເຮົາທຸກຄົນລົງໄປໃນເຮືອ, ແລະ
ໄດ້ເອົາສະບຽງອາຫານ ແລະ ສິ່ງຂອງຊຶ່ງ
ພວກເຮົາຖືກບັນຊາໃຫ້ເອົາໄປນຳແລ້ວ,
ພວກເຮົາໄດ້ອອກ [ກ]ທະເລ ແລະ ຖືກພັດໄປ
ດ້ວຍ ລົມໄປຫາ [ຂ]ແຜ່ນດິນແຫ່ງຄຳສັນຍາ.

9 ແລະ ຫລັງຈາກພວກເຮົາຖືກພັດໄປ
ດ້ວຍລົມເປັນເວລາຫລາຍມື້, ຈົ່ງເບິ່ງ,
ພວກອ້າຍຂອງຂ້າພະເຈົ້າ ແລະ ພວກ
ລູກຊາຍຂອງອິດຊະມາເອນກັບເມຍຂອງ
ພວກເຂົາເລີ່ມຫາຄວາມມ່ວນຊື່ນໃຫ້ແກ່
ຕົນເອງ, ເຖິງຂະໜາດທີ່ພວກເຂົາເລີ່ມ
ເຕັ້ນລຳ, ແລະ ຮ້ອງເພງ, ແລະ ເວົ້າຄຳ
ຫຍາບຄາຍ, ແທ້ຈິງແລ້ວ, ຈົນເຖິງຂັ້ນລືມ
ໄປວ່າ ໂດຍອຳນາດອັນໃດທີ່ນຳພວກເຂົາ
ມາເຖິງບ່ອນນີ້; ແທ້ຈິງແລ້ວ, ພວກເຂົາລົ້ນ
ເລີງຈົນສະແດງຄວາມຫຍາບຄາຍຫລາຍ
ຂຶ້ນ.

10 ແລະ ຂ້າພະເຈົ້ານີໄຟເລີ່ມຢ້ານກົວ
ຢ່າງໜັກເພາະຢ້ານວ່າພຣະຜູ້ເປັນເຈົ້າ
ຈະພຣະພິໂລດໃຫ້ພວກເຮົາ, ແລະ ລົງ
ທັນພວກເຮົາເພາະຄວາມຊົ່ວຮ້າຍຂອງ
ພວກເຮົາຈົນວ່າພວກເຮົາຖືກກືນລົງໄປ
ໃນຄວາມເລິກຂອງທະເລ; ດັ່ງນັ້ນ ຂ້າພະ
ເຈົ້ານີໄຟຈຶ່ງເລີ່ມເວົ້າກັບພວກເຂົາດ້ວຍສະ
ຕິສຳປະສັນຍະຫລາຍຢ່າງ; ແຕ່ຈົ່ງເບິ່ງ,
ພວກເຂົາ [ກ]ໃຈຮ້າຍໃຫ້ຂ້າພະເຈົ້າໂດຍ
ກ່າວວ່າ: ພວກເຮົາບໍ່ຍອມໃຫ້ນ້ອງຊາຍ
ຂອງພວກເຮົາມາເປັນ [ຂ]ຜູ້ປົກຄອງພວກ
ເຮົາຢ່າງເດັດຂາດ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເລມັນກັບເລມູເອນໄດ້ຈັບຂ້າພະເຈົ້າ ແລະ
ໄດ້ມັດຂ້າພະເຈົ້າໄວ້ດ້ວຍເຊືອກ, ແລະ
ພວກເຂົາໄດ້ເຮັດຮຸນແຮງຕໍ່ຂ້າພະເຈົ້າ
ຫລາຍຢ່າງ; ເຖິງຢ່າງໃດກໍຕາມ, ພຣະຜູ້
ເປັນເຈົ້າໄດ້ [ກ]ຍອມໃຫ້ພວກເຂົາເຮັດໄປ

---

4 ກ 1 ນຟ 16:5.
6 ກ 1 ນຟ 17:2.
7 ກ 2 ນຟ 2:1.
ຂ 2 ນຟ 3:1.
8 ກ 2 ນຟ 10:20.
ຂ 1 ນຟ 2:20.
ຄມພ ແຜ່ນດິນ
ແຫ່ງຄຳສັນຍາ.
10 ກ 1 ນຟ 17:17–55.
ຂ ປຖກ 37:9–11;
1 ນຟ 16:37–38;
2 ນຟ 1:25–27.
11 ກ ແອວ 14:11.

ເພື່ອພຣະອົງຈະໄດ້ສະແດງອຳນາດ ແລະ
ລິດເດດຂອງພຣະອົງໃຫ້ປະກົດຕາມພຣະ
ຄຳຊຶ່ງພຣະອົງໄດ້ຮັບສັ່ງໄວ້ກ່ຽວກັບຄົນ
ຊົ່ວ.
12 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ຫລັງຈາກພວກເຂົາໄດ້ມັດຂ້າພະເຈົ້າເຖິງ
ຂະໜາດທີ່ຂ້າພະເຈົ້າເໜັງຕີງບໍ່ໄດ້ແລ້ວ
[ກ]ເຂັມທິດທີ່ພຣະຜູ້ເປັນເຈົ້າຕຽມໄວ້ໃຫ້ກໍ
ຢຸດເຮັດວຽກ.
13 ດັ່ງນັ້ນ, ພວກເຂົາບໍ່ຮູ້ວ່າຈະແລ່ນ
ເຮືອໄປທາງໃດ, ເຖິງຂະໜາດທີ່ເມື່ອເກີດ
ລົມພະຍຸໃຫຍ່, ແທ້ຈິງແລ້ວ, ເປັນພະຍຸຝົນ
ຟ້າຄະນອງທີ່ຮ້າຍແຮງ ແລະ ໜ້າຢ້ານກົວ,
ແລ້ວພວກເຮົາກໍຖືກ [ກ]ພັດກັບຄືນໄປເທິງ
ຜືນນ້ຳເປັນເວລາສາມມື້; ແລະ ພວກເຂົາ
ເລີ່ມຕົກໃຈຢ່າງໜັກຢ້ານວ່າພວກເຂົາຈະ
ຈົມນ້ຳໃນທະເລ; ເຖິງຢ່າງໃດກໍຕາມ, ພວກ
ເຂົາກໍຍັງບໍ່ປ່ອຍຂ້າພະເຈົ້າໄປ.
14 ແລະ ໃນມື້ທີສີ່ ຊຶ່ງພວກເຮົາໄດ້ຖືກ
ພັດກັບຄືນໄປນັ້ນ, ພະຍຸຝົນຟ້າຄະນອງ
ເລີ່ມຮຸນແຮງຫລາຍຂຶ້ນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາເກືອບຖືກກືນລົງໄປໃນຄວາມ
ເລິກຂອງທະເລ ແລະ ຫລັງຈາກພວກເຮົາ
ຖືກພັດກັບຄືນໄປເທິງແຜ່ນນ້ຳເປັນເວລາ
ສີ່ມື້, ພວກອ້າຍຂອງຂ້າພະເຈົ້າເລີ່ມ [ກ]ເຫັນ
ວ່າການພິພາກສາຂອງພຣະເຈົ້າເກີດກັບ
ພວກເຂົາແລ້ວ, ແລະ ພວກເຂົາຈະຕ້ອງ
ຕາຍເວັ້ນເສຍແຕ່ຈະກັບໃຈຈາກຄວາມ
ຊົ່ວຮ້າຍຂອງພວກເຂົາ; ດັ່ງນັ້ນ, ພວກເຂົາ
ຈຶ່ງມາຫາຂ້າພະເຈົ້າ ແລະ ແກ້ເຊືອກທີ່ມັດ
ມືຂອງຂ້າພະເຈົ້າອອກ ແລະ ຈົ່ງເບິ່ງ ມັນ
ບວມຊ້ຳຢ່າງໜັກ ແລະ ຂໍ້ຂາຂອງຂ້າພະ
ເຈົ້າກໍບວມຊ້ຳຫລາຍຄືກັນ ແລະ ຄວາມ
ເຈັບປວດກໍທະວີຂຶ້ນ.
16 ເຖິງ ຢ່າງ ໃດ ກໍ ຕາມ, ຂ້າ ພະ ເຈົ້າ
ໄດ້ຫລຽວຫາພຣະເຈົ້າຂອງຂ້າພະເຈົ້າ,
ແລະ ຂ້າພະເຈົ້າໄດ້ [ກ]ສັນລະເສີນພຣະອົງ
ຕະຫລອດທັງວັນ; ແລະ ຂ້າພະເຈົ້າບໍ່ໄດ້
ຈົ່ມໃຫ້ພຣະຜູ້ເປັນເຈົ້າ ເພາະຄວາມທຸກ
ຂອງຂ້າພະເຈົ້າເລີຍ.
17 ບັດນີ້ບິດາຂອງຂ້າພະເຈົ້າລີໄຮໄດ້
ເວົ້າຫລາຍເລື່ອງກັບພວກເຂົາ ແລະ ກັບ
ລູກຊາຍຂອງ [ກ]ອິດຊະມາເອນນຳອີກ; ແຕ່
ຈົ່ງເບິ່ງ, ພວກເຂົາໄດ້ເວົ້າຂູ່ເຂັ່ນຫລາຍ
ຢ່າງກັບຄົນທີ່ເຂົ້າຂ້າງຂ້າພະເຈົ້າ ແລະ
ບິດາມານດາຂອງຂ້າພະເຈົ້າມີອາຍຸແກ່
ແລ້ວ ແລະ ໂດຍທີ່ທົນຕໍ່ຄວາມໂສກເສົ້າ
ຫລາຍບໍ່ໄດ້ເພາະລູກໆຂອງພວກເພິ່ນ,
ພວກເພິ່ນຈຶ່ງລົ້ມປ່ວຍລົງ, ແທ້ຈິງແລ້ວ,
ຈົນເຖິງແມ່ນແຕ່ຕ້ອງນອນຢູ່ເທິງຕຽງ.
18 ເພາະຄວາມໂສກເສົ້າ ແລະ ຄວາມ
ເສົ້າສະຫລົດໃຈຂອງພວກເພິ່ນນັ້ນໃຫຍ່
ຫລວງ ແລະ ເພາະຄວາມຊົ່ວຮ້າຍຂອງ
ພວກອ້າຍຂອງຂ້າພະເຈົ້າ, ພວກເພິ່ນ
ເກືອບຈະຖືກພາໄປເຖິງແມ່ນຖືກພາໄປ
ເພື່ອເຝົ້າພຣະເຈົ້າຂອງພວກເພິ່ນ; ແທ້ຈິງ
ແລ້ວ, ຜົມສີເທົາຂອງພວກເພິ່ນແທບຈະ
ຖືກນຳລົງມາວາງໄວ້ຢູ່ໃຕ້ພື້ນດິນ; ແທ້ຈິງ
ແລ້ວ, ເຖິງແມ່ນຈະຖືກໂຍນລົງຫລຸມສົບ
ໃນນ້ຳ ເພາະຄວາມເສົ້າສະຫລົດໃຈນັ້ນ.
19 ແລະ ຢາໂຄບກັບໂຢເຊັບອີກ, ໂດຍທີ່
ຍັງເປັນເດັກນ້ອຍຢູ່ຍ່ອມຕ້ອງການບຳລຸງ
ລ້ຽງດູຢ່າງດີ ຈຶ່ງໂສກເສົ້າເພາະຄວາມທຸກ
ຂອງແມ່ຂອງພວກເຂົາ; ແລະ ທັງ [ກ]ເມຍ
ຂອງຂ້າພະເຈົ້າພ້ອມທັງນ້ຳຕາ ແລະ ການ

12ກ 1 ນຟ 16:10, 16, 26; 2 ນຟ 5:12; ແອວ 37:38–47; ຄພ 17:1.
13ກ ມຊຢ 1:17.
15ກ ຣລມ 12:3.
16ກ ແອວ 36:28.
17ກ 1 ນຟ 7:4–20.
19ກ 1 ນຟ 7:19; 16:7.

ອະທິຖານ ແລະ ທັງລູກໆຂອງຂ້າພະເຈົ້າກໍ
ບໍ່ໄດ້ເຮັດໃຫ້ໃຈຂອງພວກອ້າຍຂອງຂ້າພະ
ເຈົ້າອ່ອນລົງ ແລະ ປ່ອຍຂ້າພະເຈົ້າເລີຍ.
20 ແລະ ບໍ່ມີສິ່ງໃດອີກແລ້ວນອກຈາກ
ອຳນາດຂອງພຣະເຈົ້າ ຊຶ່ງຂູ່ເຂັນພວກເຂົາ
ດ້ວຍຄວາມພິນາດທີ່ເຮັດໃຫ້ໃຈຂອງພວກ
ເຂົາອ່ອນລົງ; ດັ່ງນັ້ນ, ເມື່ອພວກເຂົາເຫັນ
ວ່າ ພວກເຂົາເກືອບຈະຖືກກືນລົງໄປໃນ
ຄວາມເລິກຂອງທະເລ, ພວກເຂົາຈຶ່ງກັບ
ໃຈຈາກສິ່ງທີ່ໄດ້ເຮັດລົງໄປ, ເຖິງຂະໜາດ
ທີ່ພວກເຂົາໄດ້ປ່ອຍຕົວຂ້າພະເຈົ້າ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກພວກເຂົາໄດ້ປ່ອຍຕົວຂ້າພະເຈົ້າ
ແລ້ວ, ຈົ່ງເບິ່ງ, ຂ້າພະເຈົ້າໄດ້ເອົາເຂັມທິດ
ມາ ແລະ ມັນກໍໄດ້ເຮັດວຽກຕາມທີ່ຂ້າພະ
ເຈົ້າປາດຖະໜາໃຫ້ເຮັດ; ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ອະທິຖານ
ຫາພຣະຜູ້ເປັນເຈົ້າ; ຫລັງຈາກຂ້າພະເຈົ້າ
ອະທິຖານແລ້ວ, ລົມພະຍຸກໍຢຸດລົງ ແລະ ມີ
ຄວາມສະຫງົບຄືນອີກ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ນຳເຮືອໄປເພື່ອພວກເຮົາ
ຈະແລ່ນໄປຫາແຜ່ນດິນແຫ່ງຄຳສັນຍາ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກພວກເຮົາໄດ້ແລ່ນເຮືອໄປເປັນ
ເວລາຫລາຍມື້ ພວກເຮົາໄດ້ມາເຖິງ [ກ]ແຜ່ນ
ດິນແຫ່ງຄຳສັນຍາ; ແລະ ພວກເຮົາໄດ້ຂຶ້ນ
ໄປໃນແຜ່ນດິນນັ້ນ ແລະ ໄດ້ຕັ້ງຜ້າເຕັ້ນ
ຂອງພວກເຮົາຂຶ້ນ, ແລະ ພວກເຮົາໄດ້ໃສ່
ຊື່ໃຫ້ມັນວ່າ ແຜ່ນດິນແຫ່ງຄຳສັນຍາ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ເລີ່ມໄຖດິນ, ແລະ ພວກເຮົາ
ໄດ້ເລີ່ມປູກເມັດພືດ; ແທ້ຈິງແລ້ວ, ພວກ
ເຮົາໄດ້ປູກເມັດພືດທັງໝົດ, ຊຶ່ງພວກເຮົາ
ນຳມາຈາກແຜ່ນດິນເຢຣູຊາເລັມລົງໃນ
ດິນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ໄດ້ງອກງາມຢ່າງຍິ່ງ; ດັ່ງນັ້ນ ພວກເຮົາຈຶ່ງ
ໄດ້ຮັບພອນຢ່າງຫລວງຫລາຍ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຮົາເດີນທາງຢູ່ໃນແຜ່ນດິນແຫ່ງຄຳ
ສັນຍາ, ພວກເຮົາໄດ້ພົບວ່າມີສັດທຸກຊະ
ນິດຢູ່ໃນປ່າໃນແຜ່ນດິນແຫ່ງຄຳສັນຍາ,
ທັງງົວແມ່ ແລະ ງົວເຖິກ, ລາ ແລະ ມ້າ, ແບ້
ບ້ານ ແລະ ແບ້ປ່າ, ແລະ ສັດປ່າທຸກຊະນິດ
ທີ່ມະນຸດຈະໃຊ້ໄດ້. ແລະ ພວກເຮົາໄດ້ພົບ
ແຮ່ທາດທຸກຊະນິດ, ທັງຄຳ, ແລະ ເງິນ,
ແລະ ທອງແດງ.

## ບົດທີ 19

*ນີໄຟເຮັດແຜ່ນຈາລຶກດ້ວຍໂລຫະ ແລະ ຂຽນປະຫວັດສາດຂອງຜູ້ຄົນຂອງເພິ່ນ—ພຣະເຈົ້າຂອງອິດສະຣາເອນ ຈະສະເດັດມາໃນຫົກຮ້ອຍປີນັບແຕ່ລີໄຮໜີຈາກເຢຣູຊາເລັມ—ນີໄຟບອກເຖິງຄວາມທຸກທໍລະມານ ແລະ ການຄຶງເທິງໄມ້ກາງແຂນ—ຊາວຢິວຈະຖືກກຽດຊັງ ແລະ ຈະກະຈັດກະຈາຍໄປຈົນເຖິງຍຸກສຸດທ້າຍ, ເມື່ອເວລາທີ່ພວກເຂົາຈະກັບຄືນມາຫາພຣະຜູ້ເປັນເຈົ້າ. ປະມານ 588–570 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າໄດ້ບັນຊາຂ້າພະເຈົ້າ, ດັ່ງນັ້ນຂ້າ
ພະເຈົ້າຈຶ່ງໄດ້ເຮັດແຜ່ນຈາລຶກດ້ວຍໂລຫະ
ເພື່ອຂ້າພະເຈົ້າຈະໄດ້ຈາລຶກເລື່ອງລາວ
ຕ່າງໆຂອງຜູ້ຄົນຂອງຂ້າພະເຈົ້າໄວ້ໃນ
ນັ້ນ. ແລະ ໃນ [ກ]ແຜ່ນຈາລຶກທີ່ຂ້າພະເຈົ້າ
ໄດ້ເຮັດຂຶ້ນນີ້ ຂ້າພະເຈົ້າຕ້ອງຈາລຶກເລື່ອງ
ລາວຕ່າງໆຂອງ [ຂ]ບິດາຂອງຂ້າພະເຈົ້າ

23 *ກ* ຄມພ ແຜ່ນດິນ ແຫ່ງຄຳສັນຍາ.

**19** 1 *ກ* ຄມພ ແຜ່ນຈາລຶກ.
*ຂ* 1 ນຟ 1:16–17; 6:1–3.

ແລະ ການເດີນທາງຂອງພວກເຮົາໃນຖິ່ນ
ແຫ້ງແລ້ງກັນດານ ແລະ ຄຳທຳນາຍຂອງ
ບິດາຂອງຂ້າພະເຈົ້ານຳອີກ; ແລະ ຄຳທຳ
ນາຍຫລາຍຢ່າງຂອງຂ້າພະເຈົ້າເອງ ຂ້າ
ພະເຈົ້າໄດ້ຂຽນໄວ້ໃນນັ້ນນຳອີກ.

2 ແລະ ຂ້າພະເຈົ້າບໍ່ຮູ້ຈັກໃນເວລາທີ່
ຂ້າພະເຈົ້າເຮັດມັນຂຶ້ນວ່າ ຂ້າພະເຈົ້າຈະ
ໄດ້ຮັບບັນຊາຈາກພຣະຜູ້ເປັນເຈົ້າໃຫ້ເຮັດ
[ກ]ແຜ່ນຈາລຶກເຫລົ່ານີ້; ດັ່ງນັ້ນ, ບັນທຶກຂອງ
ບິດາຂອງຂ້າພະເຈົ້າ ແລະ ລຳດັບການສືບ
ເຊື້ອສາຍຂອງບັນພະບຸລຸດຂອງເພິ່ນ ແລະ
ສ່ວນໃຫຍ່ຂອງການກະທຳຂອງພວກເຮົາ
ໃນຖິ່ນແຫ້ງແລ້ງກັນດານ ຈຶ່ງມີຈາລຶກໄວ້
ໃນແຜ່ນຈາລຶກເຫລັ້ມທຳອິດທີ່ຂ້າພະເຈົ້າ
ໄດ້ເວົ້າເຖິງນັ້ນ; ດັ່ງນັ້ນ, ສິ່ງທີ່ເປັນຄວາມ
ຈິງທີ່ເກີດຂຶ້ນກ່ອນຂ້າພະເຈົ້າເຮັດ [ຂ]ແຜ່ນ
ຈາລຶກເຫລົ່ານີ້ ຈຶ່ງມີກ່າວໄວ້ສະເພາະໃນ
ແຜ່ນຈາລຶກເຫລັ້ມທຳອິດ.

3 ແລະ ຫລັງຈາກຂ້າພະເຈົ້າໄດ້ເຮັດ
ແຜ່ນຈາລຶກເຫລົ່ານີ້ຕາມພຣະບັນຍັດ
ແລ້ວ, ຂ້າພະເຈົ້ານີໄຟໄດ້ຮັບພຣະບັນຍັດ
ວ່າການປະຕິບັດສາດສະໜາກິດ ແລະ
ຄຳທຳນາຍຢ່າງແຈ່ມແຈ້ງ ແລະ ມີຄ່າຢ່າງ
ຫລວງຫລາຍຈະຖືກຂຽນໄວ້ໃນ [ກ]ແຜ່ນ
ຈາລຶກເຫລົ່ານີ້; ແລະ ສິ່ງທີ່ຖືກຂຽນໄວ້ຈະ
ໄດ້ຮັບການຮັກສາໄວ້ ເພື່ອເປັນຄຳແນະນຳ
ໃຫ້ຜູ້ຄົນຂອງຂ້າພະເຈົ້າຜູ້ທີ່ຈະໄດ້ເປັນ
ເຈົ້າຂອງແຜ່ນດິນນີ້, ແລະ ເພື່ອຈຸດປະສົງ
ອັນ [ຂ]ສະຫລາດອື່ນໆອີກທີ່ຈຸດປະສົງນັ້ນ
ເປັນທີ່ຮູ້ຈັກແກ່ພຣະຜູ້ເປັນເຈົ້າ.

4 ດັ່ງນັ້ນ, ຂ້າພະເຈົ້ານີໄຟໄດ້ເຮັດບັນ
ທຶກອັນໜຶ່ງໄວ້ໃນແຜ່ນຈາລຶກອື່ນໆ ຊຶ່ງ
ໃຫ້ເລື່ອງລາວ ຫລື ຊຶ່ງໃຫ້ເລື່ອງລາວສ່ວນ
ຫລາຍກ່ຽວກັບສົງຄາມ ແລະ ການຂັດແຍ້ງ
ແລະ ຄວາມພິນາດຂອງຜູ້ຄົນຂອງຂ້າພະ
ເຈົ້າ. ແລະ ຂ້າພະເຈົ້າເຮັດການນີ້ ແລະ ສັ່ງ
ຜູ້ຄົນຂອງຂ້າພະເຈົ້າວ່າ ພວກເຂົາຄວນ
ເຮັດແນວໃດຫລັງຈາກທີ່ຂ້າພະເຈົ້າຈາກ
ໄປແລ້ວ ແລະ ວ່າແຜ່ນຈາລຶກເຫລົ່ານີ້ຈະ
ຖືກມອບໃຫ້ຈາກລຸ້ນໜຶ່ງຕໍ່ໃຫ້ລຸ້ນໜຶ່ງ, ຫລື
ຈາກສາດສະດາຜູ້ໜຶ່ງຕໍ່ໃຫ້ສາດສະດາອີກ
ຜູ້ໜຶ່ງ ຈົນກວ່າຈະໄດ້ຮັບພຣະບັນຍັດເພີ່ມ
ເຕີມຈາກພຣະຜູ້ເປັນເຈົ້າ.

5 ແລະ ເລື່ອງລາວຂອງຂ້າພະເຈົ້າກ່ຽວ
ກັບ [ກ]ການເຮັດແຜ່ນຈາລຶກເຫລົ່ານີ້ຈະມີ
ກ່າວຕໍ່ຈາກນີ້ໄປ; ແລະ ແລ້ວຈົ່ງເບິ່ງ, ຂ້າ
ພະເຈົ້າດຳເນີນການຕາມທີ່ຂ້າພະເຈົ້າເວົ້າ
ມາ; ແລະ ການນີ້ຂ້າພະເຈົ້າເຮັດເພື່ອສິ່ງທີ່
ສັກສິດຈະໄດ້ຮັບການ [ຂ]ຮັກສາໄວ້ເພື່ອໃຫ້
ເປັນຄວາມຮູ້ແກ່ຜູ້ຄົນຂອງຂ້າພະເຈົ້າ.

6 ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າກໍບໍ່ໄດ້
ຂຽນອັນໃດໃນແຜ່ນຈາລຶກນີ້ ນອກຈາກ
ເລື່ອງທີ່ຂ້າພະເຈົ້າຄິດວ່າມັນ [ກ]ສັກສິດ.
ແລະ ບັດນີ້, ຖ້າຫາກຂ້າພະເຈົ້າເຮັດຜິດໄປ
ແມ່ນແຕ່ຄົນແຕ່ກ່ອນກໍຍັງໄດ້ເຮັດຜິດໄປ;
ຂ້າພະເຈົ້າຈະບໍ່ແກ້ຕົວໃຫ້ຕົນເອງວ່າເປັນ
ຄວາມຜິດຂອງຜູ້ອື່ນ, ແຕ່ຂ້າພະເຈົ້າຂໍແກ້
ຕົວວ່າມັນເປັນເພາະ [ຂ]ຄວາມອ່ອນແອທີ່
ມີຢູ່ກັບຂ້າພະເຈົ້າອັນເປັນເລື່ອງຂອງເນື້ອ
ໜັງ.

7 ເພາະສິ່ງທີ່ບາງຄົນຖືວ່າມີຄຸນຄ່າທີ່ສຸດ
ຕໍ່ຮ່າງກາຍ ແລະ ຈິດວິນຍານ, ບາງຄົນ

---

2 *ກ* 2 ນຟ 5:30.
*ຂ* 1 ນຟ 9:1–5.
3 *ກ* ຢຄ 1:1–4; 3:13–14; 4:1–4.
*ຂ* 1 ນຟ 9:4–5; ຄມ 1:7; ຄພ 3:19–20; 10:1–51.
5 *ກ* 2 ນຟ 5:28–33.
*ຂ* ຄມພ ພຣະຄຳພີ—ພຣະຄຳພີທີ່ຕ້ອງຮັກສາໄວ້.
6 *ກ* ເບິ່ງ ໜ້າວິເຄາະສະບັບຂອງພຣະຄຳພີມໍມອນ. ຄມພ ສັກສິດ, ຄວາມສັກສິດ.
*ຂ* ມມ 8:13–17; ອທ 12:23–28.

ຈະຖືວ່າ [ກ]ບໍ່ມີຄຸນຄ່າ ແລະ ຢຽບຍ່ຳໄວ້ໃຕ້ຕີນຂອງຕົນ. ແທ້ຈິງແລ້ວ, ເຖິງແມ່ນພຣະເຈົ້າຂອງອິດສະຣາເອນອົງນີ້ຍັງຖືກມະນຸດ [ຂ]ຢຽບຍ່ຳໄວ້ໃຕ້ຕີນຂອງເຂົາ; ຂ້າພະເຈົ້າເວົ້າວ່າຢຽບຍ່ຳໄວ້ໃຕ້ຕີນຂອງເຂົາ ແຕ່ຂ້າພະເຈົ້າຈະເວົ້າດ້ວຍອີກຄຳໜຶ່ງຄື—ເຂົາຖືວ່າພຣະອົງບໍ່ມີຄຸນຄ່າ ແລະ ບໍ່ເຊື່ອຟັງສຸລະສຽງແນະນຳຂອງພຣະອົງ ແຕ່ຢ່າງໃດ.
8 ແລະ ຈົ່ງເບິ່ງພຣະອົງຈະ [ກ]ສະເດັດມາ
ຕາມຄຳເວົ້າຂອງທູດໃນ [ຂ]ຫົກຮ້ອຍປີນັບແຕ່ບິດາຂອງຂ້າພະເຈົ້າໄດ້ໜີຈາກເຢຣູຊາເລັມ.
9 ແລະ ເພາະຄວາມຊົ່ວຮ້າຍຂອງມະນຸດ
ສະໂລກ, ເຂົາຈະຕັດສິນພຣະອົງວ່າບໍ່ມີຄ່າ; ດັ່ງນັ້ນ ເຂົາຈຶ່ງຂ້ຽນພຣະອົງ ແລະ ພຣະອົງໄດ້ທົນ ແລະ ເຂົາຕີພຣະອົງ ແລະ ພຣະອົງໄດ້ທົນ; ແທ້ຈິງແລ້ວ, ເຂົາ [ກ]ຖົ່ມນ້ຳລາຍໃສ່ພຣະອົງ ແລະ ພຣະອົງໄດ້ທົນ, ເພາະຄວາມກະລຸນາຮັກຫອມຂອງພຣະອົງ ແລະ ຄວາມອົດກັ້ນທີ່ພຣະອົງມີຕໍ່ລູກຫລານມະນຸດ.
10 ແລະ [ກ]ພຣະເຈົ້າຂອງບັນພະບຸລຸດ
ຂອງພວກເຮົາຜູ້ຖືກ [ຂ]ນຳພາອອກຈາກເອຢິບຈາກຄວາມເປັນທາດ ແລະ ໄດ້ຮັບການປົກປັກຮັກສາຈາກພຣະອົງໃນຖິ່ນແຫ້ງແລ້ງກັນດານ, ແທ້ຈິງແລ້ວ, [ຄ]ພຣະເຈົ້າຂອງອັບຣາຮາມ, ແລະ ຂອງອີຊາກ, ແລະ ພຣະເຈົ້າຂອງຢາໂຄບໄດ້ [ງ]ຍອມຕົວຂອງພຣະອົງເອງຢ່າງມະນຸດໃຫ້ຕົກຢູ່ໃນກຳມືຂອງຄົນຊົ່ວຕາມຄຳເວົ້າຂອງທູດ, ແລະ ຖືກ [ຈ]ຍົກຂຶ້ນຕາມຄຳເວົ້າຂອງ [ສ]ຊີໂນກ, ແລະ ຖືກ [ຊ]ຄຶງໄວ້ເທິງໄມ້ກາງແຂນຕາມຄຳເວົ້າຂອງນີອຳ, ແລະ ຖືກຝັງໄວ້ໃນ [ຍ]ອຸບມຸງຕາມຄຳເວົ້າຂອງ [ດ]ຊີນັດ, ຊຶ່ງເພິ່ນເວົ້າກ່ຽວກັບສາມມື້ແຫ່ງ [ຕ]ຄວາມມືດ ຊຶ່ງຈະເປັນເຄື່ອງໝາຍຂອງການສິ້ນພຣະຊົນໃຫ້ຄົນທີ່ຢູ່ຕາມເກາະໃນທະເລຮູ້ຈັກ, ໂດຍສະເພາະໃຫ້ຄົນທີ່ເປັນ [ຖ]ເຊື້ອສາຍອິດສະຣາເອນຫລາຍກວ່າຄົນອື່ນໆ.
11 ເພາະສາດສະດາໄດ້ເວົ້າໄວ້ດັ່ງນີ້: ຄື
ອົງພຣະຜູ້ເປັນເຈົ້າຈະ [ກ]ສະເດັດມາຢ້ຽມຢາມເຊື້ອສາຍອິດສະຣາເອນທັງໝົດຢ່າງແນ່ນອນໃນມື້ນັ້ນ, ອາດຈະເປັນໂດຍສຸລະສຽງຂອງພຣະອົງ ເພາະຄວາມຊອບທຳຂອງພວກເຂົາອັນນຳມາຊຶ່ງຄວາມປິຕິຍິນດີ ແລະ ຄວາມລອດອັນຍິ່ງໃຫຍ່ຂອງພວກເຂົາ, ແລະ ຄົນອື່ນໆດ້ວຍ [ຂ]ຟ້າຮ້ອງ ແລະ ຟ້າຜ່າແຫ່ງອຳນາດຂອງພຣະອົງ, ດ້ວຍ

7 *ກ* 2 ນຟ 33:2;
ຢຄ 4:14.
*ຂ* ຄມພ ກະບົດ, ການກະບົດ.
8 *ກ* ຄມພ ພຣະເຢຊູຄຣິດ—ການທຳນາຍກ່ຽວກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ.
*ຂ* 1 ນຟ 10:4;
2 ນຟ 25:19.
9 *ກ* ອຊຢ 50:5–6;
ມທ 27:30.
10 *ກ* 2 ນຟ 26:12;
ມຊຢ 7:27; 27:30–31;
ແອວ 11:38–39;
3 ນຟ 11:14–15.
*ຂ* ອພຍ 3:2–10; 6:6;
1 ນຟ 5:15;
ຄພ 136:22.
*ຄ* ປຖກ 32:9;
ມຊຢ 7:19;
ຄພ 136:21.
ຄມພ ເຢໂຮວາ.
*ງ* ຄມພ ຊົດໃຊ້, ການຊົດໃຊ້.
*ຈ* 3 ນຟ 27:14.
*ສ* ແອວ 33:15; 34:7;
ຮລມ 8:19–20;
3 ນຟ 10:15–16.
ຄມພ ຊີໂນກ;
ພຣະຄຳພີ—ພຣະຄຳພີທີ່ສູນເສຍໄປ.
*ຊ* 2 ນຟ 6:9;
ມຊຢ 3:9.
ຄມພ ຄຶງ, ການຄຶງ.
*ຍ* ມທ 27:60;
ລກ 23:53;
2 ນຟ 25:13.
*ດ* ຢຄ 6:1;
ຮລມ 15:11.
ຄມພ ຊີນັດ.
*ຕ* 1 ນຟ 12:4–5;
ຮລມ 14:20, 27;
3 ນຟ 8:3, 19–23; 10:9.
*ຖ* 3 ນຟ 16:1–4.
11 *ກ* 3 ນຟ 9;
ຄພ 5:16.
*ຂ* ຮລມ 14:20–27;
3 ນຟ 8:5–23.

ພະຍຸຝົນຟ້າຄະນອງ, ດ້ວຍໄຟ, ແລະ ດ້ວຍ
ຄວັນ, ແລະ ດ້ວຍ ອາຍແຫ່ງ [ຄ]ຄວາມມືດ
ແລະ ດ້ວຍ [ງ]ແຜ່ນດິນແຍກອອກຈາກກັນ
ພ້ອມທັງ [ຈ]ພູເຂົາ ຊຶ່ງຈະຖືກຍົກອອກໄປ.
12 ແລະ ສາດສະດາ [ກ]ຊີນັດ ໄດ້ເວົ້າໄວ້
ວ່າ ເລື່ອງ [ຂ]ທັງໝົດນີ້ຈະຕ້ອງເກີດຂຶ້ນຢ່າງ
ແນ່ນອນ. ແລະ [ຄ]ຫີນຂອງແຜ່ນດິນໂລກຈະ
ຕ້ອງແຍກອອກ; ແລະ ຍ້ອນສຽງຄວນຄາງ
ຂອງແຜ່ນດິນໂລກ, ກະສັດຈຳນວນຫລວງ
ຫລາຍຂອງເກາະໃນທະເລຈະຖືກພຣະວິນ
ຍານຂອງພຣະເຈົ້າກະທຳໃຫ້ຮ້ອງອອກມາ
ວ່າ: ພຣະເຈົ້າແຫ່ງທຳມະຊາດຮັບທຸກທໍລະ
ມານ.
13 ແລະ ສຳລັບຄົນທີ່ຢູ່ໃນເຢຣູຊາເລັມ,
ສາດສະດາໄດ້ເວົ້າໄວ້ວ່າ, ພວກເຂົາຈະ
ຖືກຄົນທັງປວງ [ກ]ຂ້ຽນຕີ ເພາະພວກເຂົາ
[ຂ]ຄຶງພຣະເຈົ້າຂອງອິດສະຣາເອນໄວ້ເທິງ
ໄມ້ກາງແຂນ ແລະ ຫັນໃຈຂອງພວກເຂົາ
ໄປປະຕິເສດເຄື່ອງໝາຍ ແລະ ການແປກ
ປະຫລາດ ແລະ ອຳນາດ ແລະ ລັດສະໝີ
ພາບຂອງພຣະເຈົ້າແຫ່ງອິດສະຣາເອນ.
14 ສາດສະດາໄດ້ເວົ້າໄວ້ວ່າ ແລະ ເປັນ
ຍ້ອນພວກເຂົາຫັນໃຈໄປ ແລະ [ກ]ດູໝິ່ນ
ພຣະຜູ້ບໍລິສຸດຂອງອິດສະຣາເອນ, ພວກ
ເຂົາຈະແຊະໆຊຳໆໄປໃນເນື້ອໜັງ, ແລະ
ຕາຍ, ແລະ ກັບເປັນຜູ້ຖືກ [ຂ]ຕິສິນ [ຄ]ນິນທາ,
ແລະ ຖືກກຽດຊັງຢູ່ໃນບັນດາປະຊາຊາດ
ທັງປວງ.
15 ເຖິງຢ່າງໃດກໍຕາມ, ສາດສະດາຍັງ
ໄດ້ເວົ້າອີກວ່າ, ເມື່ອມື້ນັ້ນມາເຖິງ ເມື່ອ
ພວກເຂົາຈະບໍ່ຫັນໃຈຂອງພວກເຂົາມາ
ຕໍ່ຕ້ານພຣະຜູ້ບໍລິສຸດຂອງອິດສະຣາເອນ
[ກ]ອີກຕໍ່ໄປ, ເມື່ອນັ້ນພຣະອົງຈະລະນຶກເຖິງ
[ຂ]ພັນທະສັນຍາ ຊຶ່ງພຣະອົງໄດ້ເຮັດໄວ້ກັບ
ບັນພະບຸລຸດຂອງພວກເຂົາ.
16 ແທ້ຈິງແລ້ວ, ເມື່ອນັ້ນພຣະອົງຈະລະ
ນຶກເຖິງ [ກ]ເກາະໃນທະເລ; ແທ້ຈິງແລ້ວ,
ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, ເຮົາຈະ [ຂ]ເຕົ້າ
ໂຮມ ແລະ ທຸກຄົນທີ່ເປັນເຊື້ອສາຍອິດສະ
ຣາເອນຈະມາເຕົ້າໂຮມກັນຈາກສີ່ສ່ວນ
ຂອງແຜ່ນດິນໂລກ ຕາມຄຳເວົ້າຂອງສາດ
ສະດາຊີນັດ.
17 ແທ້ຈິງແລ້ວ, ແລະ ທົ່ວພື້ນແຜ່ນດິນ
ໂລກຈະ [ກ]ເຫັນຄວາມລອດຂອງພຣະຜູ້
ເປັນເຈົ້າ, ສາດສະດາໄດ້ເວົ້າໄວ້ວ່າທຸກປະ
ຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກ
ຜູ້ຄົນທັງປວງຈະໄດ້ຮັບພອນ.
18 ແລະ ຂ້າພະເຈົ້ານີໄຟໄດ້ຂຽນເລື່ອງ
ເຫລົ່ານີ້ເຖິງຜູ້ຄົນຂອງຂ້າພະເຈົ້າເພື່ອບາງ
ທີຂ້າພະເຈົ້າຈະໄດ້ຊັກຊວນພວກເຂົາໃຫ້
ລະນຶກເຖິງພຣະຜູ້ເປັນເຈົ້າພຣະຜູ້ໄຖ່ຂອງ
ພວກເຂົາ.
19 ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ເວົ້າກ່ຽວ
ກັບເຊື້ອສາຍອິດສະຣາເອນທຸກຄົນ, ຖ້າ
ເປັນໄປວ່າພວກເຂົາຈະໄດ້ຮັບ [ກ]ເລື່ອງ
ເຫລົ່ານີ້.

---

11 ຄ ລກ 23:44–45; 3 ນຟ 8:19–20.
ງ 2 ນຟ 26:5.
ຈ 3 ນຟ 8:10.
12 ກ ຢຄ 5:1.
ຂ ຮລມ 14:20–28.
ຄ ມທ 27:51.
13 ກ ລກ 23:27–30.
ຂ 2 ນຟ 10:3.
14 ກ ອຊຢ 53:3–6; ມຊຢ 14:3–6.
ຂ ຄມພ ຊາວຢິວ.
ຄ ພບຍ 28:37; 1 ກສ 9:7; 3 ນຟ 16:9.
15 ກ 1 ນຟ 22:11–12.
ຂ ຄມພ ພັນທະສັນຍາ ຂອງອັບຣາຮາມ.
16 ກ 1 ນຟ 22:4; 2 ນຟ 10:21.
ຂ ອຊຢ 49:20–22. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວ ອິດສະຣາເອນ.
17 ກ ອຊຢ 40:4–5.
19 ກ 2 ກສ 17:13; ອມ 3:7. ຄມພ ສາດສະດາ.

20 ເພາະ ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ ໄດ້ ເຮັດ
ວຽກ ທາງ ວິນ ຍານ ເພື່ອ ຜູ້ ທີ່ ຢູ່ ໃນ ເຢຣູ
ຊາເລັມຊຶ່ງເຮັດ ໃຫ້ ຂ້າ ພະ ເຈົ້າ ອິດເມື່ອຍ
ຈົນວ່າຂ້າພະເຈົ້າອ່ອນເພຍໄປໝົດ, ເພາະ
ຖ້າຫາກພຣະຜູ້ເປັນເຈົ້າບໍ່ເມດຕາທີ່ຈະ
ສະແດງແກ່ຂ້າພະເຈົ້າ ກ່ຽວກັບຄົນເຫລົ່າ
ນັ້ນເໝືອນດັ່ງທີ່ພຣະອົງໄດ້ສະແດງແກ່
ສາດສະດາໃນສະໄໝກ່ອນແລ້ວ, ຂ້າພະ
ເຈົ້າກໍຈະຕາຍເໝືອນກັນ.
21 ແລະ ພຣະອົງໄດ້ສະແດງເລື່ອງທັງ
ໝົດທີ່ [ກ]ກ່ຽວກັບພວກເຂົາແກ່ [ຂ]ສາດສະ
ດາໃນສະໄໝກ່ອນ ໂດຍແນ່ແທ້; ແລະ
ພຣະອົງໄດ້ສະແດງແກ່ສາດສະດາຫລາຍ
ທ່ານກ່ຽວກັບພວກເຮົານຳອີກ; ດັ່ງນັ້ນ, ຈຶ່ງ
ເປັນການຈຳເປັນທີ່ພວກເຮົາຕ້ອງຮູ້ກ່ຽວ
ກັບພວກເຂົາ ເພາະມັນມີຂຽນໄວ້ໃນແຜ່ນ
ຈາລຶກທອງເຫລືອງ.
22 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ສິດສອນເລື່ອງເຫລົ່ານີ້ໃຫ້
ແກ່ພວກອ້າຍນ້ອງຂອງຂ້າພະເຈົ້າ; ແລະ
ເຫດການ ໄດ້ບັງ ເກີດຂຶ້ນ ຄື ຂ້າ ພະ ເຈົ້າ
ໄດ້ອ່ານຫລາຍເລື່ອງທີ່ມີຈາລຶກໄວ້ຢູ່ໃນ
[ກ]ແຜ່ນຈາລຶກທອງເຫລືອງ, ເພື່ອພວກເຂົາ
ຈະໄດ້ຮູ້ກ່ຽວກັບການກະທຳຂອງພຣະຜູ້
ເປັນເຈົ້າກັບຜູ້ຄົນສະໄໝກ່ອນໃນແຜ່ນດິນ
ອື່ນໆ.
23 ແລະ ຂ້າ ພະ ເຈົ້າ ໄດ້ ອ່ານ ຫລາຍ
ເລື່ອງຊຶ່ງມີຂຽນຢູ່ໃນ [ກ]ໜັງສືໂມເຊໃຫ້ພວກ
ເຂົາຟັງ; ແຕ່ວ່າ ເພື່ອຂ້າພະເຈົ້າຈະໄດ້ຊັກ
ຊວນໃຫ້ພວກເຂົາເຊື່ອຢ່າງເຕັມທີ່ໃນພຣະ
ຜູ້ເປັນເຈົ້າພຣະຜູ້ໄຖ່ຂອງພວກເຂົາ, ຂ້າ
ພະເຈົ້າຈຶ່ງໄດ້ອ່ານເລື່ອງທີ່ມີຂຽນໄວ້ໂດຍ
ສາດສະດາ [ຂ]ເອຊາຢາໃຫ້ພວກເຂົາຟັງ;
ເພາະຂ້າພະເຈົ້າໄດ້ [ຄ]ປຽບທຽບພຣະຄຳພີ
ທັງໝົດກັບຕົວພວກເຮົາ, ເພື່ອມັນຈະໄດ້
ເປັນ [ງ]ຜົນປະໂຫຍດ ແລະ ເປັນການຮຽນ
ຮູ້ຂອງພວກເຮົາ.
24 ດັ່ງນັ້ນ ຂ້າພະເຈົ້າໄດ້ເວົ້າກັບພວກ
ເຂົາ ມີຄວາມວ່າ: ພວກເຈົ້າຈົ່ງຟັງຄຳເວົ້າ
ຂອງສາດສະດາ ເພາະ ພວກເຈົ້າເປັນ
ສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອສາຍອິດສະ
ຣາເອນ, ຜູ້ເປັນ [ກ]ກິ່ງງ່າທີ່ແຕກຫັກອອກ
ມາ; ພວກເຈົ້າຈົ່ງຟັງຄຳເວົ້າຂອງສາດສະ
ດາທີ່ໄດ້ຂຽນໄວ້ກ່ຽວກັບເຊື້ອສາຍອິດສະ
ຣາເອນທຸກຄົນ, ແລະ ຈົ່ງປຽບທຽບຂໍ້
ຄວາມນັ້ນກັບຕົວຂອງພວກເຈົ້າເອງ, ເພື່ອ
ພວກເຈົ້າຈະມີຄວາມຫວັງເຊັ່ນດຽວກັນກັບ
ພີ່ນ້ອງຂອງພວກເຈົ້າຊຶ່ງພວກເຈົ້າໄດ້ແຕກ
ອອກມາຈາກພວກເຂົາ; ເພາະສາດສະດາ
ໄດ້ຂຽນໄວ້ແນວນັ້ນ.

## ບົດທີ 20

*ພຣະຜູ້ເປັນເຈົ້າເປີດເຜີຍພຣະປະສົງຂອງພຣະອົງແກ່ອິດສະຣາເອນ—ອິດສະຣາເອນຈະອອກໄປຈາກບາບີໂລນ ແລະ ຖືກເລືອກໃນເຕົາໄຟແຫ່ງຄວາມທຸກ—ປຽບທຽບກັບ ເອຊາຢາ 48. ປະມານ 588–570 ປີ ກ່ອນ ຄ.ສ.*

1 ຈົ່ງເຊື່ອຟັງຂໍ້ຄວາມນີ້ເຖີດ, ໂອ້ ເຊື້ອ
ສາຍຂອງຢາໂຄບ, ຜູ້ທີ່ຖືກເອີ້ນໃນນາມ
ຂອງເຊື້ອສາຍອິດສະຣາເອນ, ແລະ ຜູ້ທີ່

21 *ກ* ອນ 1:16; ມມ 5:12; 7:9–10.
*ຂ* 3 ນຟ 10:16–17.
22 *ກ* 1 ນຟ 22:1.
23 *ກ* ອພຍ 17:14; 1 ນຟ 5:11; ມຊ 1:40–41.
*ຂ* 1 ນຟ 15:20; 2 ນຟ 25:4–6; 3 ນຟ 23:1.
*ຄ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
*ງ* 2 ນຟ 4:15.
24 *ກ* ປຖກ 49:22–26; 1 ນຟ 15:12; 2 ນຟ 3:4–5.

ອອກມາຈາກນ້ຳແຫ່ງຢູດາ ຫລື ອອກມາ
ຈາກນ້ຳແຫ່ງ [ກ]ການບັບຕິສະມາ, ຜູ້ທີ່ໄດ້
ສາບານໃນພຣະນາມຂອງພຣະຜູ້ເປັນ
ເຈົ້າ ແລະ ເວົ້າເຖິງພຣະເຈົ້າຂອງອິດສະ
ຣາເອນ, ແຕ່ເຂົາຍັງບໍ່ສາມາດສາບານ
ດ້ວຍຄວາມຈິງ ຫລື ຄວາມຊອບທຳເທື່ອ.
2 ເຖິງຢ່າງໃດກໍຕາມ, ເຂົາຂະໜານນາມ
ຕົນເອງຕາມ [ກ]ນະຄອນສັກສິດ, ແຕ່ເຂົາບໍ່
ໄດ້ [ຂ]ມີຄວາມໝັ້ນຄົງຢູ່ໃນພຣະເຈົ້າຂອງ
ອິດສະຣາເອນ, ຜູ້ເປັນຈອມໂຍທາ; ແທ້
ຈິງແລ້ວ, ພຣະນາມຂອງພຣະອົງຄືຈອມ
ໂຍທາ.
3 ຈົ່ງເບິ່ງ, ເລື່ອງລາວ [ກ]ແຕ່ກ່ອນນັ້ນ ເຮົາ
ປະກາດແລ້ວຕັ້ງແຕ່ຕົ້ນ ແລະ ມັນອອກ
ມາຈາກປາກຂອງເຮົາແລ້ວ, ແລະ ເຮົາໄດ້
ສະແດງແລ້ວແກ່ເຂົາ. ເຮົາໄດ້ສະແດງແກ່
ເຂົາໂດຍທັນທີ.
4 ແລະ ເຮົາໄດ້ເຮັດເພາະເຮົາຮູ້ຈັກວ່າ
[ກ]ເຈົ້າເປັນຄົນດື້ດ້ານ ແລະ ຄໍຂອງເຈົ້າແຂງ
ເໝືອນເຫລັກ, ແລະ ໜ້າຂອງເຈົ້າເປັນ
ທອງເຫລືອງ;
5 ແລະ ເຮົາປະກາດແກ່ເຈົ້າແລ້ວຕັ້ງແຕ່
ຕົ້ນວ່າ ເຮົາໄດ້ສະແດງມັນກ່ອນເຫດການ
ຈະເກີດຂຶ້ນ ແລະ ເຮົາໄດ້ສະແດງມັນແກ່
ເຈົ້າ ເພາະຢ້ານເຈົ້າເວົ້າວ່າ—[ກ]ຮູບບູຊາ
ຂອງເຮົາໄດ້ເຮັດຂຶ້ນມາ ແລະ ຮູບຄວັດສະ
ຫລັກຂອງເຮົາ ແລະ ຮູບຫລໍ່ຂອງເຮົາໄດ້
ບັນຊາມັນຂຶ້ນມາ.
6 ເຈົ້າໄດ້ເຫັນ ແລະ ໄດ້ຍິນເລື່ອງທັງໝົດ
ນີ້ແລ້ວ ເຈົ້າຈະບໍ່ປະກາດມັນບໍ? ແລະ ຕັ້ງ
ແຕ່ເວລານີ້ໄປ ເຮົາຈະເລົ່າສິ່ງໃໝ່ໆໃຫ້
ເຈົ້າຟັງ, ເປັນສິ່ງທີ່ປິດຊ້ອນໄວ້ ຊຶ່ງເຈົ້າບໍ່
ເຄີຍໄດ້ຍິນມາກ່ອນ.
7 ເປັນສິ່ງທີ່ສ້າງຂຶ້ນໃໝ່, ບໍ່ແມ່ນດົນມາ
ແລ້ວ, ກ່ອນມື້ນີ້ເຈົ້າບໍ່ເຄີຍໄດ້ຍິນກ່ຽວກັບ
ມັນ ຢ້ານວ່າເຈົ້າຈະເວົ້າວ່າ—ຈົ່ງເບິ່ງ ຂ້າ
ນ້ອຍຮູ້ແລ້ວ.
8 ແທ້ຈິງແລ້ວ, ເຈົ້າບໍ່ໄດ້ຍິນມັນດອກ;
ແທ້ຈິງແລ້ວ, ເຈົ້າບໍ່ຮູ້ຈັກມັນດອກ; ແທ້ຈິງ
ແລ້ວ, ນັບແຕ່ເວລານັ້ນຫູຂອງເຈົ້າບໍ່ໄດ້
ເປີດ; ເພາະເຮົາຮູ້ວ່າເຈົ້າຈະກະທຳການທໍ
ລະຍົດຢ່າງໃຫຍ່ຫລວງ ແລະ ຖືກເອີ້ນວ່າ
[ກ]ຜູ້ລະເມີດຕັ້ງແຕ່ໃນທ້ອງແມ່.
9 ເຖິງຢ່າງໃດກໍຕາມ ເພາະເຫັນແກ່ [ກ]ຊື່
ຂອງເຮົາ ເຮົາຈຶ່ງອົດກັ້ນພຣະພິໂລດໄວ້,
ແລະ ເພາະເຫັນແກ່ຄວາມສັນລະເສີນ
ຂອງເຮົາ, ເຮົາຈຶ່ງຫ້າມບໍ່ໃຫ້ຕັດເຈົ້າອອກ
ໄປ.
10 ເພາະ ຈົ່ງ ເບິ່ງ, ເຮົາຫລໍ່ຫລອມເຈົ້າ,
ເຮົາເລືອກເຈົ້າໃນເຕົາໄຟແຫ່ງ [ກ]ຄວາມ
ທຸກ.
11 ເພື່ອເຫັນແກ່ເຮົາ, ແທ້ຈິງແລ້ວ, ເພື່ອ
ເຫັນແກ່ເຮົາ, ເຮົາຈະທຳການນີ້, ເພາະວ່າ
ເຮົາຈະບໍ່ຍອມໃຫ້ [ກ]ຊື່ຂອງເຮົາມີມົນທິນ,
ແລະ ເຮົາຈະ [ຂ]ບໍ່ສະລະລັດສະໝີພາບ
ຂອງເຮົາໃຫ້ແກ່ຜູ້ອື່ນ.
12 ຈົ່ງເຊື່ອຟັງເຮົາ, ໂອ້ ຢາໂຄບ, ແລະ
ອິດສະຣາເອນ, ຜູ້ທີ່ເຮົາເອີ້ນແລ້ວ ເຮົາກໍຄື
ເຂົາ; ເຮົາເປັນຜູ້ [ກ]ທຳອິດ ແລະ ເປັນຜູ້ສຸດ
ທ້າຍນັ້ນ.

**20** 1*ກ* ຄມພ ບັບຕິສະມາ,
ໃຫ້ບັບຕິສະມາ.
2*ກ* ອຊຢ 52:1.
ຄມພ ເຢຣູຊາເລັມ.
*ຂ* ອສ ເພິ່ງ.
3*ກ* ອຊຢ 46:9–10.
4*ກ* ອສ ອິດສະຣາເອນ.
5*ກ* ຄມພ ການນັບຖືຮູບບູຊາ.
8*ກ* ພສສ 58:3.
9*ກ* 1 ຊມອ 12:22;
ພສສ 23:3;
1 ຢຮ 2:12.
10*ກ* ຄມພ ຍາກລຳບາກ,
ຄວາມຍາກລຳບາກ.
11*ກ* ຢມຢ 44:26.
*ຂ* ອຊຢ 42:8;
ມຊ 4:1–4.
12*ກ* ພນມ 1:17; 22:13.
ຄມພ ລູກາກາ;
ອາລະຟາ ແລະ ໂອເມຄາ.

13 ມືຂອງເຮົາ ᵏວາງພື້ນຖານຂອງແຜ່ນ
ດິນໂລກ, ແລະ ມືຂວາຂອງເຮົາຄືບເຖິງຟ້າ
ສະຫວັນ. ເຮົາເອີ້ນມັນ ແລະ ມັນພາກັນລຸກ
ຂຶ້ນ.

14 ທ່ານທັງຫລາຍຈົ່ງຊຸມນຸມກັນ, ແລະ
ຟັງ; ຜູ້ໃດໃນບັນດາພວກນັ້ນທີ່ປະກາດ
ເລື່ອງເຫລົ່ານີ້ແກ່ພວກເຂົາ? ພຣະຜູ້ເປັນ
ເຈົ້າຮັກຜູ້ນັ້ນ; ແທ້ຈິງແລ້ວ ແລະ ຜູ້ນັ້ນຈະ
ເຮັດໃຫ້ພຣະຄຳຂອງພຣະອົງທີ່ພວກເຂົາ
ປະກາດ ᵏສຳເລັດ; ແລະ ພຣະອົງຈະເຮັດ
ກັບ ᵏບາບີໂລນຕາມພຣະໄທຂອງພຣະອົງ
ແລະ ແຂນຂອງພຣະອົງຈະມາຢູ່ເທິງຊາວ
ເຄນເດຍ.

15 ພຣະຜູ້ເປັນເຈົ້າໄດ້ກ່າວອີກວ່າ; ເຮົາ
ພຣະຜູ້ເປັນເຈົ້າ, ແທ້ຈິງແລ້ວ, ເຮົາໄດ້ກ່າວ
ໄວ້; ແທ້ຈິງແລ້ວ, ເຮົາໄດ້ເອີ້ນເຂົາໃຫ້ມາ
ປະກາດ, ເຮົາພາເຂົາມາ, ແລະ ເຂົາຈະ
ເຮັດທາງຂອງເຂົາໃຫ້ຈະເລີນ.

16 ຈົ່ງເຂົ້າມາໃກ້ເຮົາ; ເຮົາບໍ່ໄດ້ເວົ້າໃນ
ທີ່ ᵏລີ້ລັບ; ຕັ້ງແຕ່ຕົ້ນ, ຕັ້ງແຕ່ເວລາທີ່ມີປະ
ກາດເຮົາກໍເວົ້າແລ້ວ ແລະ ອົງພຣະຜູ້ເປັນ
ເຈົ້າ ແລະ ພຣະວິນຍານຂອງພຣະອົງໄດ້
ສົ່ງເຮົາມາ.

17 ແລະ ພຣະຜູ້ເປັນເຈົ້າ, ᵏພຣະຜູ້ໄຖ່
ຂອງເຈົ້າ ແລະ ພຣະຜູ້ບໍລິສຸດຂອງອິດສະ
ຣາເອນໄດ້ກ່າວດັ່ງນີ້; ເຮົາໄດ້ສົ່ງເຂົາໄປ,
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ,
ຜູ້ສິດສອນເຈົ້າເພື່ອໃຫ້ເປັນປະໂຫຍດ, ຜູ້
ᵏນຳພາເຈົ້າໄປຕາມທາງທີ່ເຈົ້າຄວນໄປ,
ໄດ້ເຮັດສິ່ງນັ້ນ.

18 ໂອ້ ຖ້າເຈົ້າເຊື່ອຟັງ ᵏບັນຍັດຂອງເຮົາ
ເມື່ອນັ້ນສັນຕິສຸກຂອງເຈົ້າຈະເປັນດັ່ງແມ່
ນ້ຳ— ແລະ ຄວາມຊອບທຳຂອງເຈົ້າຈະ
ເປັນດັ່ງຄື້ນໃນທະເລ.

19 ແລະ ᵏລູກຫລານຂອງເຈົ້າຈະເປັນ
ດັ່ງດິນຊາຍ; ແລະ ລູກຜູ້ອອກຈາກອຸທອນ
ຂອງເຈົ້າກໍຈະເປັນເໝືອນດັ່ງເມັດຊາຍ; ຊື່
ຂອງເຂົາຈະບໍ່ຖືກຕັດອອກ ຫລື ຖືກທຳ
ລາຍຕໍ່ໜ້າເຮົາ.

20 ຈົ່ງ ᵏອອກໄປຈາກບາບີໂລນ, ຈົ່ງໜີ
ໄປຈາກຊາວເຄນເດຍ, ຈົ່ງປະກາດດ້ວຍ
ສຽງເພງ, ຈົ່ງບອກເລື່ອງນີ້, ຈົ່ງອອກໄປ
ສຸດແຜ່ນດິນໂລກ; ເຈົ້າຈົ່ງກ່າວວ່າ: ພຣະ
ຜູ້ເປັນເຈົ້າໄດ້ໄຖ່ຢາໂຄບ ᵏຜູ້ຮັບໃຊ້ຂອງ
ພຣະອົງແລ້ວ.

21 ແລະ ພວກເຂົາບໍ່ໄດ້ ᵏກະຫາຍນ້ຳ
ເວລາພຣະອົງພາເຂົາໄປທາງທະເລຊາຍ;
ພຣະອົງໄດ້ເຮັດໃຫ້ນ້ຳໄຫລອອກຈາກ
ᵏຫີນເພື່ອເຂົາ; ພຣະອົງໄດ້ຕີຫີນ ແລະ ນ້ຳ
ໄດ້ພຸ່ງອອກມາ.

22 ທັງໆທີ່ພຣະອົງເຮັດໄປທັງໝົດນີ້
ແລ້ວ, ແລະ ຫລວງຫລາຍກວ່ານີ້ອີກ, ກໍຍັງ
ບໍ່ມີ ᵏສັນຕິສຸກສຳລັບຄົນຊົ່ວ, ພຣະເຈົ້າໄດ້
ກ່າວດັ່ງນີ້.

## ບົດທີ 21

*ພຣະເມຊີອາຈະເປັນແສງສະຫວ່າງໃຫ້ແກ່
ຄົນຕ່າງຊາດ ແລະ ຈະປ່ອຍນັກໂທດເປັນ
ອິດສະລະ—ອິດສະຣາເອນຈະເຕົ້າໂຮມ*

13 *ກ* ພສສ 102:25.
ຄມພ ສ້າງ, ການສ້າງ.
14 *ກ* 1 ກສ 8:56;
ຄພ 64:31; 76:3.
*ຂ* ຄມພ ບາເບນ, ບາບີໂລນ.
16 *ກ* ອຊຢ 45:19.
17 *ກ* ຄມພ ພຣະຜູ້ໄຖ່.
*ຂ* ຄມພ ດົນໃຈ, ການດົນໃຈ;
ເປີດເຜີຍ, ການເປີດເຜີຍ.
18 *ກ* ປຍຈ 8:5.
19 *ກ* ປຖກ 22:15–19;
ຣສອ 1:10.
20 *ກ* ຢມຢ 51:6;
ຄພ 133:5–14.
*ຂ* ອຊຢ 44:1–2, 21.
21 *ກ* ອຊຢ 41:17–20.
*ຂ* ອພຍ 17:6; ຈບຊ 20:11;
1 ນຟ 17:29;
2 ນຟ 25:20.
22 *ກ* ຄມພ ສະຫງົບ,
ຄວາມສະຫງົບ.

*ກັບ ໂດຍອຳນາດໃນຍຸກສຸດທ້າຍ—ກະສັດ
ຈະເປັນພໍ່ລ້ຽງຂອງພວກເຂົາ—ປຽບທຽບ
ກັບ ເອຊາຢາ 49. ປະມານ 588–570 ປີ
ກ່ອນ ຄ.ສ.*

1 ແລະ ອີກ ເທື່ອ ໜຶ່ງ: ຈົ່ງ ເຊື່ອ ຟັງ, ໂອ້
ທ່ານຜູ້ເປັນເຊື້ອສາຍອິດສະຣາເອນ, ທ່ານ
ທຸກຄົນທີ່ແຕກອອກມາ ແລະ ຖືກຂັບໄລ່
ໄປເພາະຄວາມຊົ່ວຮ້າຍຂອງພວກນັກທຳ
ຂອງຜູ້ຄົນຂອງຂ້າພະເຈົ້າ; ແທ້ຈິງແລ້ວ,
ທ່ານທຸກຄົນທີ່ແຕກອອກມາ ແລະ ກະຈັດ
ກະຈາຍໄປຕ່າງຖິ່ນຖານ ຜູ້ທີ່ເປັນຄົນຂອງ
ຂ້າພະເຈົ້າ, ໂອ້ ເຊື້ອສາຍອິດສະຣາເອນ
ເອີຍ. ຈົ່ງຟັງ, ໂອ້ [ກ]ເກາະເອີຍ, ຈົ່ງຟັງຂ້າ
ພະເຈົ້າ, ແລະ ຈົ່ງເຊື່ອຟັງຄົນຂອງທ່ານຜູ້
ທີ່ຢູ່ [ຂ]ໄກ; ພຣະເຈົ້າໄດ້ເອີ້ນຂ້າພະເຈົ້າຕັ້ງ
ແຕ່ຂ້າພະເຈົ້າຢູ່ໃນທ້ອງ; ພຣະອົງໄດ້ບົ່ງ
ຊື່ຂອງຂ້າພະເຈົ້າຕັ້ງແຕ່ຂ້າພະເຈົ້າຢູ່ໃນອຸ
ທອນແມ່ຂອງຂ້າພະເຈົ້າ.

2 ແລະ ພຣະອົງໄດ້ເຮັດໃຫ້ປາກຂອງຂ້າ
ພະເຈົ້າເປັນຄືກັນກັບດາບທີ່ແຫລມຄົມ;
ພຣະອົງໄດ້ເຊື່ອງຂ້າພະເຈົ້າໃນຮົ່ມພຣະ
ຫັດຂອງພຣະອົງ, ແລະ ໄດ້ເຮັດໃຫ້ຂ້າພະ
ເຈົ້າເປັນລູກສອນທີ່ເຫລື້ອມເປັນເງົາ;

3 ແລະ ໄດ້ກ່າວກັບຂ້າພະເຈົ້າວ່າ: ເຈົ້າ
ຄືຜູ້ [ກ]ຮັບໃຊ້ຂອງເຮົາ, ໂອ້ ອິດສະຣາເອນ
ເອີຍ, ໃນເຈົ້າເຮົາຈະໄດ້ຮັບກຽດຕິຍົດ.

4 ຫລັງຈາກນັ້ນ ຂ້າພະເຈົ້າໄດ້ເວົ້າວ່າ
ຂ້າພະເຈົ້າໄດ້ອອກແຮງງານໂດຍບໍ່ມີປະ
ໂຫຍດ; ຂ້າພະເຈົ້າໄດ້ເປືອງແຮງຂອງຂ້າ
ພະເຈົ້າລ້າໆ ແລະ ບໍ່ມີປະໂຫຍດ; ແຕ່ແນ່
ນອນ ຄວາມຍຸດຕິທຳອັນຄວນຕົກແກ່ຂ້າ
ພະເຈົ້າຢູ່ກັບພຣະຜູ້ເປັນເຈົ້າ, ແລະ ຄ່າ
ຕອບແທນຂອງຂ້າພະເຈົ້ານັ້ນຢູ່ກັບພຣະ
ເຈົ້າຂອງຂ້າພະເຈົ້າ.

5 ແລະ ບັດນີ້, ພຣະຜູ້ເປັນເຈົ້າໄດ້
ກ່າວ—ຜູ້ [ກ]ປັ້ນຂ້າພະເຈົ້າຕັ້ງແຕ່ຢູ່ໃນ
ທ້ອງເພື່ອຂ້າພະເຈົ້າຈະໄດ້ເປັນຜູ້ຮັບໃຊ້
ຂອງພຣະອົງ ເພື່ອຈະນຳຢາໂຄບມາຫາ
ພຣະອົງ—ເຖິງແມ່ນອິດສະຣາເອນບໍ່ໄດ້
ມາຮ່ວມກັນ, ຂ້າພະເຈົ້າກໍຍັງຈະມີກຽດໃນ
ສາຍພຣະເນດຂອງພຣະຜູ້ເປັນເຈົ້າ, ແລະ
ພຣະເຈົ້າຂອງຂ້າພະເຈົ້າຈະເປັນກຳລັງໃຫ້
ຂ້າພະເຈົ້າ.

6 ແລະ ພຣະອົງກ່າວວ່າ: ມັນເປັນການ
ເລັກໜ້ອຍທີ່ເຈົ້າຈະເປັນຜູ້ຮັບໃຊ້ຂອງ
ເຮົາ ເພື່ອສະຖາປະນາ [ກ]ເຜົ່າຕ່າງໆຂອງ
ຢາໂຄບ ແລະ ເພື່ອນຳຊາວອິດສະຣາເອນ
ທີ່ເກັບຮັກສາໄວ້ກັບຄືນມາ ແລະ ເຮົາຈະ
ໃຫ້ເຈົ້າເປັນ [ຂ]ແສງສະຫວ່າງແກ່ [ຄ]ຄົນຕ່າງ
ຊາດນຳອີກ, ເພື່ອເຈົ້າຈະໄດ້ເປັນຄວາມ
ລອດຂອງເຮົາທີ່ໃຫ້ແກ່ທີ່ສຸດຂອງແຜ່ນດິນ
ໂລກ.

7 ພຣະຜູ້ເປັນເຈົ້າ ພຣະຜູ້ໄຖ່ຂອງອິດສະ
ຣາເອນ, ພຣະຜູ້ບໍລິສຸດຂອງພຣະອົງໄດ້
ກ່າວດັ່ງນີ້, ພຣະອົງຜູ້ທີ່ມະນຸດໝິ່ນປະ
ໝາດ, ຕໍ່ພຣະອົງຜູ້ທີ່ປະຊາຊາດລັງກຽດ,
ຕໍ່ຜູ້ຮັບໃຊ້ຂອງຜູ້ປົກຄອງ: ກະສັດຈະເຫັນ
ແລະ ລຸກຂຶ້ນ, ເຈົ້າຊາຍຈະນະມັດສະການ
ເຊັ່ນກັນ, ເພາະພຣະຜູ້ເປັນເຈົ້າຜູ້ຊື່ສັດ.

8 ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ໃນ
ເວລາໂປດປານ ເຮົາໄດ້ຍິນເຈົ້າ, ໂອ້ ເກາະ
ໃນທະເລ ແລະ ໃນວັນແຫ່ງຄວາມລອດ
ເຮົາໄດ້ຊ່ວຍເຈົ້າ ແລະ ເຮົາຈະຮັກສາເຈົ້າ;

---

**21** 1 *ກ* 1 ນຟ 22:4; 2 ນຟ 10:20–22.
*ຂ* ຄພ 1:1.
3 *ກ* ລລວ 25:55; ອຊຢ 41:8; ຄພ 93:45–46.
5 *ກ* ອຊຢ 44:24.
6 *ກ* ຄມພ ອິດສະຣາເອນ—ສິບສອງເຜົ່າຂອງອິດສະຣາເອນ.
*ຂ* ຄພ 103:8–10; ອຣຮ 2:10–11.
*ຄ* 3 ນຟ 21:11.

ແລະ ມອບ [ກ]ຜູ້ຮັບໃຊ້ຂອງເຮົາໃຫ້ແກ່ເຈົ້າ
ເພື່ອເປັນພັນທະສັນຍາຂອງຜູ້ຄົນ ເພື່ອ
ສະຖາປະນາແຜ່ນດິນໂລກ ເພື່ອໃຫ້ໄດ້ຮັບ
ມູນມໍລະດົກທີ່ຮ້າງວ່າງເປົ່າ;

9 ເພື່ອເຈົ້າຈະກ່າວກັບ [ກ]ນັກໂທດວ່າ: ຈົ່ງ
ອອກໄປ; ກັບຜູ້ທີ່ນັ່ງຢູ່ໃນ [ຂ]ຄວາມມືດວ່າ:
ຈົ່ງສະແດງຕົວຂອງເຈົ້າ ເຂົາຈະມີອາຫານ
ການກິນຕາມທາງ ແລະ ບ່ອນສູງທຸກແຫ່ງ
ຈະເປັນ [ຄ]ບ່ອນຫາກິນຂອງເຂົາ.

10 ເຂົາຈະບໍ່ຫິວເຂົ້າ ແລະ ບໍ່ກະຫາຍ
ນ້ຳ, ຄວາມຮ້ອນ ແລະ ແສງແດດຈະບໍ່ເຜົາ
ໄຫມ້ເຂົາ ເພາະພຣະອົງໄດ້ເມດຕາເຂົາ,
ແລະ ຈະນຳເຂົາໄປເຖິງແມ່ນຕາມແຫລ່ງ
ນ້ຳ ພຣະອົງກໍຈະນຳເຂົາໄປ.

11 ແລະ ເຮົາຈະເຮັດໃຫ້ພູເຂົາທັງໝົດ
ຂອງເຮົາເປັນທາງ ແລະ [ກ]ທາງຫລວງຂອງ
ເຮົາສູງຂຶ້ນ.

12 ແລະ ເມື່ອນັ້ນ ໂອ້ ເຊື້ອສາຍອິດສະ
ຣາເອນເອີຍ, ຈົ່ງເບິ່ງ, [ກ]ຄົນເຫລົ່ານີ້ ຈະ
ມາຈາກທາງໄກ ແລະ ບາງຈຳພວກຈະມາ
ຈາກທາງເໜືອ ແລະ ຈາກທາງຕາເວັນຕົກ
ແລະ ບາງຈຳພວກຈະມາຈາກແຜ່ນດິນຊີ
ນິມ.

13 ໂອ້ ຟ້າສະຫວັນ, ຈົ່ງ [ກ]ຮ້ອງເພງເຖີດ;
ໂອ້ ແຜ່ນດິນ, ຈົ່ງປິຕິຍິນດີເຖີດ; ເພາະຕີນ
ຂອງຄົນທີ່ຢູ່ທາງຕາເວັນອອກຈະມີບ່ອນ
ຮັບຮອງ; ແລະ ໂອ້ ພູເຂົາຈົ່ງເປັ່ງສຽງຮ້ອງ
ເພງເຖີດ ເພາະເຂົາຈະບໍ່ຖືກລົງທັນອີກຕໍ່
ໄປ; ເພາະພຣະເຈົ້າປອບໂຍນຜູ້ຄົນຂອງ
ພຣະອົງແລ້ວ ແລະ ຈະເມດຕາຄົນຂອງ
ພຣະອົງຜູ້ທີ່ເປັນທຸກ.

14 ແຕ່ຈົ່ງເບິ່ງ, ຊີໂອນກ່າວວ່າ: ພຣະຜູ້
ເປັນເຈົ້າຄົງປະປ່ອຍຂ້ານ້ອຍແລ້ວ, ແລະ
ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ຄົງລືມຂ້າ
ນ້ອຍແລ້ວ—ແຕ່ພຣະອົງຈະສະແດງວ່າ
ພຣະອົງຈະບໍ່ກະທຳເຊັ່ນນັ້ນ.

15 [ກ]ຜູ້ຍິງຈະລືມລູກທີ່ຍັງກິນນົມຂອງ
ນາງ ແລະ ຈະບໍ່ມີເມດຕາສົງສານລູກທີ່
ເກີດຈາກອຸທອນຂອງນາງບໍ? ແທ້ຈິງແລ້ວ,
ນາງອາດ [ຂ]ລືມໄດ້, ແຕ່ເຮົາຈະບໍ່ລືມເຈົ້າ,
ໂອ້ ເຊື້ອສາຍອິດສະຣາເອນ.

16 ຈົ່ງເບິ່ງ, ເຮົາຈາລຶກເຈົ້າໄວ້ໃນ [ກ]ຝາມື
ຂອງເຮົາ; ກຳແພງເມືອງຂອງເຈົ້າຢູ່ຕໍ່ໜ້າ
ເຮົາຕະຫລອດເວລາ.

17 ລູກຫລານຂອງເຈົ້າຈະຟ້າວຕໍ່ຕ້ານຜູ້
ທຳລາຍເຈົ້າ; ແລະ ຜູ້ທີ່ເຮັດໃຫ້ເຈົ້າ [ກ]ເສຍ
ຫາຍຈະໄປຈາກເຈົ້າ.

18 ຈົ່ງຫລຽວເບິ່ງອ້ອມຮອບຄົນທັງໝົດ
ນີ້ມາ [ກ]ລວມກັນ ແລະ ເຂົາຈະມາຫາເຈົ້າ,
ພຣະຜູ້ເປັນເຈົ້າໄດ້ກ່າວວ່າ ເຮົາມີຊີວິດ
ຢູ່ສັນໃດ ເຈົ້າຈະໄດ້ເຂົາທຸກຄົນມາເປັນ
ເຄື່ອງນຸ່ງຫົ່ມຂອງເຈົ້າເໝືອນກັບເຄື່ອງປະ
ດັບ ແລະ ຜູກມັດໄວ້ເໝືອນດັ່ງເຈົ້າສາວ
ສັນນັ້ນ.

19 ເພາະບ່ອນທີ່ບໍ່ມີປະໂຫຍດ ແລະ
ບ່ອນທີ່ແຫ້ງແລ້ງ, ແລະ ແຜ່ນດິນ ແຫ່ງ
ຄວາມພິນາດຂອງເຈົ້າຈົນກະທັ້ງບັດນີ້ຈະ
ແຄບເກີນໄປ ເພາະດ້ວຍຜູ້ອາໄສ; ແລະ
ພວກທີ່ກືນກິນເຈົ້າຈະຫ່າງໄກໄປຈາກເຈົ້າ.

20 ລູກຫລານທີ່ເຈົ້າຈະມີຫລັງຈາກເຈົ້າ
ສູນເສຍພວກທຳອິດໄປຈະເວົ້າເຂົ້າຫູຂອງ
ເຈົ້າວ່າ: ບ່ອນນີ້ [ກ]ແຄບເກີນໄປສຳລັບລູກ;

8 *ກ* 2 ນຟ 3:6–15; 3 ນຟ 21:8–11; ມມ 8:16, 25.
9 *ກ* ຄນພ ຄວາມລອດສຳລັບຄົນຕາຍ.
*ຂ* 2 ນຟ 3:5.
*ຄ* ອຊກ 34:14.
11 *ກ* ອຊຢ 62:10; ຄພ 133:23–32.
12 *ກ* ອຊຢ 43:5–6.
13 *ກ* ອຊຢ 44:23.
15 *ກ* ຄນພ ຜູ້ຍິງ, ກຸ່ມຜູ້ຍິງ.
*ຂ* ອຊຢ 41:17; ແອວ 46:8; ຄພ 61:36.
16 *ກ* ຊກຢ 13:6.
17 *ກ* 3 ນຟ 21:12–20.
18 *ກ* ມກ 4:11–13.
20 *ກ* ພ ຄັບ, ຫລື ແຄບ.

ຈົ່ງຫາບ່ອນໃໝ່ໃຫ້ລູກຢູ່ເຖີດ.
21 ເມື່ອນັ້ນ [ກ]ເຈົ້າຈະກ່າວຢູ່ໃນໃຈວ່າ:
ແມ່ນໃຜໜໍເກີດຄົນເຫລົ່ານີ້ໃຫ້ເຮົາ, ເມື່ອ
ເຫັນເຮົາສູນເສຍລູກຫລານຂອງເຮົາໄປ,
ແລະ ເຮົາເປັນຜູ້ [ຂ]ສູນເສຍທຸກສິ່ງ, ເປັນຊະ
ເລີຍ ແລະ ຍົກຍ້າຍໄປມາ? ແມ່ນຜູ້ໃດໜໍ
ລ້ຽງດູຄົນເຫລົ່ານີ້? ຈົ່ງເບິ່ງ ເຮົາຖືກປະຖິ້ມ
ໄວ້ຕາມລຳພັງ ຄົນເຫລົ່ານີ້ໄປຢູ່ບ່ອນໃດ
ມາ?
22 ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ຈົ່ງ
ເບິ່ງ, ເຮົາຈະຍົກມືກວັກ [ກ]ຄົນຕ່າງໆຊາດ
ແລະ ຍົກ [ຂ]ສັນຍານຂອງເຮົາຕໍ່ຜູ້ຄົນ; ແລະ
ເຂົາຈະອູ້ມລູກຊາຍຂອງເຈົ້າມາໃນອ້ອມ
[ຄ]ແຂນຂອງເຂົາ, ແລະ ສ່ວນລູກສາວຂອງ
ເຈົ້ານັ້ນ ເຂົາຈະໃສ່ບ່າແບກມາ.
23 ແລະ [ກ]ກະສັດຈະເປັນ [ຂ]ພໍ່ລ້ຽງຂອງ
ເຈົ້າ ແລະ ລາຊິນີທັງຫລາຍຈະເປັນແມ່ລ້ຽງ
ຂອງເຈົ້າ; ເຂົາເຫລົ່ານັ້ນຈະກົ້ມໜ້າລົງເຖິງ
ດິນກາບເຈົ້າ, ເຂົາຈະເລຍຂີ້ຝຸ່ນທີ່ຕີນຂອງ
ເຈົ້າ; ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນ
ເຈົ້າ; ຜູ້ທີ່ [ຄ]ລໍຄອຍເຮົາຈະບໍ່ປະສົບຄວາມ
ອາຍ.
24 ຈະເອົາເຫຍື່ອໄປຈາກຜູ້ທີ່ມີກຳລັງ
ຫລື ຈະຊ່ວຍ [ກ]ຊະເລີຍຂອງຜູ້ຊະນະໃຫ້
ພົ້ນໄດ້ບໍ?
25 ແຕ່ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້,
ເຖິງແມ່ນຊະເລີຍຂອງຄົນທີ່ຍິ່ງໃຫຍ່ກໍຈະ
ຖືກເອົາໄປ, ແລະ ເຫຍື່ອຂອງຄົນທີ່ຫຍຸ້ງ
ໂຫດກໍຈະຖືກຊ່ວຍໃຫ້ພົ້ນ; ເພາະເຮົາຈະ
ຕໍ່ສູ້ກັບຜູ້ທີ່ຕໍ່ສູ້ເຈົ້າ, ແລະ ເຮົາຈະຊ່ວຍລູກ
ຫລານຂອງເຈົ້າໃຫ້ລອດ.
26 ແລະ ເຮົາຈະ [ກ]ໃຫ້ຜູ້ບີບບັງຄັບເຈົ້າ
ກິນເນື້ອຂອງຕົນເອງ; ແລະ ເຂົາຈະເມົາ
ເລືອດຂອງເຂົາເອງເໝືອນເມົາເຫລົ້າ
ອະງຸ່ນ; ແລະ ມະນຸດທັງປວງຈະ [ຂ]ຮູ້ວ່າ
ເຮົາ, ພຣະຜູ້ເປັນເຈົ້າ, ຄືພຣະຜູ້ຊ່ວຍໃຫ້
ລອດ ແລະ ພຣະຜູ້ໄຖ່ຂອງເຈົ້າ, ແລະ
[ຄ]ພຣະຜູ້ມີລິດທານຸພາບຂອງຢາໂຄບ.

## ບົດທີ 22

*ອິດສະຣາເອນຈະກະຈັດກະຈາຍໄປທົ່ວທຸກແຫ່ງຂອງພື້ນແຜ່ນດິນໂລກ—ຄົນຕ່າງຊາດຈະບຳລຸງ ແລະ ລ້ຽງດູອິດສະຣາເອນດ້ວຍພຣະກິດຕິຄຸນໃນຍຸກສຸດທ້າຍ—ອິດສະຣາເອນຈະເຕົ້າໂຮມກັນ ແລະ ຈະລອດ, ແລະ ຄົນຊົ່ວຈະຖືກໄຟເຜົາຄືກັນກັບເຟືອງເຂົ້າ—ອານາຈັກຂອງຊາຕານຈະຖືກທຳລາຍ ແລະ ຊາຕານຈະຖືກມັດໄວ້. ປະມານ 588–570 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກຂ້າພະເຈົ້ານີໄຟໄດ້ອ່ານເລື່ອງ
ເຫລົ່ານີ້ທີ່ມີຈາລຶກໄວ້ໃນ [ກ]ແຜ່ນຈາລຶກ
ທອງເຫລືອງແລ້ວ, ພວກອ້າຍຂອງຂ້າພະ
ເຈົ້າໄດ້ມາຫາຂ້າພະເຈົ້າ ແລະ ຖາມວ່າ:
ເລື່ອງທີ່ເຈົ້າອ່ານມານັ້ນໝາຍຄວາມວ່າ
ແນວໃດ? ຈົ່ງເບິ່ງ, ຈະໃຫ້ພວກເຮົາເຂົ້າໃຈ
ເລື່ອງເຫລົ່ານີ້ວ່າມັນເປັນຕາມເລື່ອງທາງ
ວິນຍານທີ່ຈະເກີດຂຶ້ນຝ່າຍວິນຍານ ແລະ
ບໍ່ແມ່ນຝ່າຍເນື້ອໜັງບໍ?
2 ແລະ ຂ້າພະເຈົ້ານີໄຟກ່າວກັບພວກ
ເຂົາວ່າ: ຈົ່ງເບິ່ງ ເລື່ອງເຫລົ່ານີ້ໄດ້ຖືກ

---

21 *ກ* ອສ ຊີໂອນ.
*ຂ* ອຊຢ 54:1; ຄລຕ 4:27.
22 *ກ* ອຊຢ 66:18–20.
*ຂ* ອຊຢ 11:12; 18:3.
*ຄ* 1 ນຟ 22:8; 2 ນຟ 10:8–9.
23 *ກ* ອຊຢ 60:16.
*ຂ* 1 ນຟ 22:6.
*ຄ* 2 ນຟ 6:13; ຄພ 98:2; 133:10–11, 45.
24 *ກ* 1 ນຟ 21:25.
26 *ກ* 1 ນຟ 22:13–14.
*ຂ* ມຊຢ 11:22.
*ຄ* ຄມພ ເຢໂຮວາ.
**22** 1 *ກ* 1 ນຟ 19:22; 2 ນຟ 4:2.

[ກ]ສະແດງໃຫ້ປະຈັກແກ່ [ຂ]ສາດສະດາໂດຍ
ສຸລະສຽງຂອງພຣະວິນຍານ; ເພາະໂດຍ
[ຄ]ພຣະວິນຍານທຸກຢ່າງທີ່ຈະເກີດກັບລູກ
ຫລານມະນຸດຕາມທາງເນື້ອໜັງຍ່ອມເປັນ
ທີ່ຮູ້ແກ່ສາດສະດາ.
3 ດັ່ງນັ້ນ, ເລື່ອງທີ່ເຮົາອ່ານມານັ້ນ ຈຶ່ງ
ເປັນເລື່ອງກ່ຽວກັບທັງ [ກ]ຝ່າຍໂລກ ແລະ
ຝ່າຍວິນຍານເພາະເບິ່ງວ່າບໍ່ຊ້າກໍໄວທີ່
ເຊື້ອສາຍອິດສະຣາເອນຈະ [ຂ]ກະຈັດກະ
ຈາຍໄປທົ່ວພື້ນແຜ່ນດິນໂລກ ແລະ ໃນບັນ
ດາປະຊາຊາດທັງປວງນຳອີກ.
4 ແລະ ຈົ່ງເບິ່ງ, ມີຄົນຈຳນວນຫລວງ
ຫລາຍທີ່ຫາຍສາບສູນໄປແລ້ວຈາກຄວາມ
ຮູ້ຂອງຜູ້ທີ່ຢູ່ໃນເຢຣູຊາເລັມ. ແທ້ຈິງແລ້ວ,
ສ່ວນໃຫຍ່ຂອງຄົນທຸກ [ກ]ເຜົ່າໄດ້ຖືກ [ຂ]ພາ
ໄປ; ແລະ ເຂົາໄດ້ກະຈັດກະຈາຍໄປຕາມ
[ຄ]ເກາະໃນທະເລ; ແລະ ເຂົາຢູ່ໃສບໍ່ມີໃຜໃນ
ພວກເຮົາຮູ້ເລີຍ, ນອກຈາກພວກເຮົາຮູ້ມາ
ວ່າເຂົາໄດ້ຖືກພາໄປເທົ່ານັ້ນ.
5 ແລະ ເນື່ອງຈາກເຂົາຖືກພາໄປ ຈຶ່ງມີ
ສາດສະດາທຳນາຍເຖິງເລື່ອງເຫລົ່ານີ້ ຊຶ່ງ
ກ່ຽວກັບເຂົາ ແລະ ກ່ຽວກັບທຸກຄົນຊຶ່ງຕໍ່
ຈາກນີ້ຈະກະຈັດກະຈາຍໄປ ແລະ ສັບສົນ
ເພາະພຣະຜູ້ບໍລິສຸດຂອງອິດສະຣາເອນ;
ເພາະເຂົາເຮັດໃຈແຂງກະດ້າງຕໍ່ພຣະອົງ;
ດັ່ງນັ້ນ, ເຂົາຈຶ່ງຈະກະຈັດກະຈາຍໄປໃນ
ບັນດາປະຊາຊາດທັງປວງ ແລະ ຈະເປັນທີ່
[ກ]ກຽດຊັງຂອງທຸກຄົນ.
6 ເຖິງຢ່າງໃດກໍຕາມ, ຫລັງຈາກເຂົາໄດ້
ຮັບການ [ກ]ບຳລຸງລ້ຽງດູຈາກ [ຂ]ຄົນຕ່າງຊາດ
ແລ້ວ, ພຣະເຈົ້າຍົກພຣະຫັດໃຫ້ຄົນຕ່າງ
ຊາດ, ແລະ ຕັ້ງເຂົາໄວ້ເປັນຫລັກສັນຍານ,
ແລະ [ຄ]ລູກຫລານຂອງເຂົາຈະຖືກອູ້ມມາ
ໃນອ້ອມແຂນ ແລະ ລູກສາວຂອງເຂົາຈະ
ຖືກແບກມາເທິງບ່າ, ຈົ່ງເບິ່ງ ເລື່ອງເຫລົ່າ
ນີ້ ຊຶ່ງມີເວົ້າໄວ້ເປັນເລື່ອງຝ່າຍໂລກ; ເພາະ
ພັນທະສັນຍາຂອງພຣະຜູ້ເປັນເຈົ້າກັບບັນ
ພະບຸລຸດຂອງພວກເຮົາເປັນດັ່ງນັ້ນ; ແລະ
ໝາຍເຖິງພວກເຮົາໃນວັນທີ່ຈະມາເຖິງ,
ແລະ ພີ່ນ້ອງທຸກຄົນຂອງພວກເຮົາທີ່ເປັນ
ເຊື້ອສາຍອິດສະຣາເອນນຳອີກ.
7 ແລະ ໝາຍຄວາມວ່າ ເວລາຈະມາເຖິງ
ຄື ຫລັງຈາກເຊື້ອສາຍອິດສະຣາເອນທັງ
ໝົດໄດ້ກະຈັດກະຈາຍໄປ ແລະ ສັບສົນ
ແລ້ວ, ອົງພຣະຜູ້ເປັນເຈົ້າຈະຍົກປະເທດ
ທີ່ຍິ່ງໃຫຍ່ປະເທດໜຶ່ງຂຶ້ນໃນບັນດາ [ກ]ຄົນ
ຕ່າງຊາດ, ແທ້ຈິງແລ້ວ, ມັນແມ່ນພື້ນແຜ່ນ
ດິນນີ້ ແລະ ໂດຍພວກເຂົາລູກຫລານຂອງ
ພວກເຮົາຈຶ່ງຈະ [ຂ]ກະຈັດກະຈາຍໄປ.
8 ແລະ ຫລັງຈາກທີ່ລູກຫລານຂອງພວກ
ເຮົາໄດ້ກະຈັດກະຈາຍໄປແລ້ວ ອົງພຣະຜູ້
ເປັນເຈົ້າຈະເຮັດ [ກ]ສິ່ງອັດສະຈັນຢ່າງໜຶ່ງ
ໃນບັນດາ [ຂ]ຄົນຕ່າງຊາດ ຊຶ່ງຈະ [ຄ]ມີຄຸນ
ຄ່າທີ່ຍິ່ງໃຫຍ່ກັບລູກຫລານຂອງພວກເຮົາ;

2 ກ 2 ປຕ 1:19–21.
ຂ ຄມພ ທຳນາຍ, ການ ທຳນາຍ, ຄຳທຳນາຍ.
ຄ ຄມພ ພຣະວິນຍານບໍລິສຸດ.
3 ກ ຄພ 29:31–34.
ຂ 1 ນຟ 10:12–14; 2 ນຟ 25:14–16. ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ.
4 ກ ຄມພ ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.
ຂ 2 ນຟ 10:22.
ຄ 1 ນຟ 21:1; 2 ນຟ 10:8, 20.
5 ກ 1 ນຟ 19:14.
6 ກ 1 ນຟ 21:23.
ຂ ຄມພ ຄົນຕ່າງຊາດ.
ຄ 1 ນຟ 15:13.
7 ກ 3 ນຟ 20:27.
ຂ 1 ນຟ 13:12–14; 2 ນຟ 1:11.
8 ກ ອຊຢ 29:14; 1 ນຟ 14:7; 2 ນຟ 27:26. ຄມພ ການຟື້ນຟູພຣະກິດຕິຄຸນ.
ຂ 2 ນຟ 10:10–11; 3 ນຟ 16:4–7; ມມ 5:19.
ຄ 1 ນຟ 15:13–18; 3 ນຟ 5:21–26; 21:7.

ດັ່ງນັ້ນ, ມັນຈຶ່ງເປັນເໝືອນກັບພວກເຂົາຖືກບຳລຸງລ້ຽງຈາກຄົນຕ່າງຊາດ ແລະ ຖືກອູ້ມມາໃນອ້ອມແຂນຂອງພວກເຂົາ ແລະ ແບກໃສ່ບ່າຂອງພວກເຂົາມາ.

9 ແລະ ມັນຈະ [ກ]ມີຄຸນຄ່າກັບຄົນຕ່າງຊາດ, ແລະ ບໍ່ພຽງແຕ່ກັບຄົນຕ່າງຊາດເທົ່ານັ້ນ ແຕ່ [ຂ]ຍັງມີຄຸນຄ່າກັບ [ຄ]ເຊື້ອສາຍອິດສະຣາເອນທັງໝົດນຳອີກ, ໃນວັນທີ່ຈະໃຫ້ຮູ້ຈັກເຖິງ [ງ]ພັນທະສັນຍາຂອງພຣະບິດາເທິງສະຫວັນທີ່ຊົງກະທຳໄວ້ກັບອັບຣາຮາມ, ໂດຍກ່າວວ່າ: ໃນ [ຈ]ລູກຫລານຂອງເຈົ້າທຸກຕະກຸນຂອງແຜ່ນດິນໂລກຈະໄດ້ [ສ]ຮັບພອນ.

10 ແລະ ພວກອ້າຍຂອງເຮົາເອີຍ, ເຮົາຢາກໃຫ້ພວກເຈົ້າຮູ້ວ່າ ທຸກຕະກຸນຂອງແຜ່ນດິນໂລກຈະຮັບພອນບໍ່ໄດ້ ເວັ້ນເສຍແຕ່ພຣະອົງຈະ [ກ]ກາງແຂນຂອງພຣະອົງຕໍ່ສາຍຕາຂອງປະຊາຊາດເສຍກ່ອນ.

11 ດັ່ງນັ້ນ, ອົງພຣະຜູ້ເປັນເຈົ້າຈະດຳເນີນການກາງແຂນຂອງພຣະອົງຕໍ່ສາຍຕາຂອງປະຊາຊາດ, ໂດຍນຳເອົາພັນທະສັນຍາຂອງພຣະອົງ ແລະ ພຣະກິດຕິຄຸນຂອງພຣະອົງມາໃຫ້ຜູ້ທີ່ເປັນເຊື້ອສາຍອິດສະຣາເອນ.

12 ດັ່ງນັ້ນ, ພຣະອົງຈະນຳພວກເຂົາອອກມາຈາກການເປັນຊະເລີຍນຳອີກ, ແລະ ພວກເຂົາຈະຖືກ [ກ]ເຕົ້າໂຮມເຂົ້າມາຫາແຜ່ນດິນຊຶ່ງເປັນມູນມໍລະດົກຂອງພວກເຂົາ; ແລະ ພວກເຂົາຈະຖືກນຳອອກຈາກການປິດບັງ ແລະ ອອກຈາກ [ຂ]ຄວາມມືດ; ແລະ ພວກເຂົາຈະຮູ້ຈັກວ່າ [ຄ]ພຣະຜູ້ເປັນເຈົ້າຄື [ງ]ພຣະຜູ້ຊ່ວຍໃຫ້ລອດ ແລະ ພຣະຜູ້ໄຖ່ຂອງພວກເຂົາ, [ຈ]ພຣະຜູ້ມີລິດທານຸພາບຂອງອິດສະຣາເອນ.

13 ແລະ ເລືອດຂອງສາດສະໜາຈັກໃຫຍ່ ແລະ [ກ]ໜ້າກຽດຊັງນັ້ນ ຊຶ່ງເປັນໂສເພນີຂອງແຜ່ນດິນໂລກທັງໝົດ ຈະໄຫລລົງໃສ່ຫົວຂອງພວກເຂົາເອງ, ເພາະພວກເຂົາຈະເຮັດ [ຂ]ສົງຄາມລະຫວ່າງພວກເຂົາເອງ, ແລະ ດາບໃນມືຂອງພວກເຂົາ [ຄ]ເອງຈະຕົກໃສ່ຫົວຂອງພວກເຂົາເອງ ແລະ ພວກເຂົາຈະມຶນເມົາດ້ວຍເລືອດຂອງພວກເຂົາເອງ.

14 ໂອ້ ເຊື້ອສາຍອິດສະຣາເອນເອີຍ ແລະ ທຸກ [ກ]ປະຊາຊາດທີ່ຈະເຮັດສົງຄາມຕໍ່ຕ້ານເຈົ້າຈະຫັນມາຕໍ່ສູ້ກັນເອງ ແລະ ພວກເຂົາຈະ [ຂ]ຕົກຫລຸມຊຶ່ງຂຸດໄວ້ດັກຜູ້ຄົນຂອງພຣະຜູ້ເປັນເຈົ້າ; ແລະ ທຸກຄົນທີ່ [ຄ]ຕໍ່ສູ້ກັບຊີໂອນຈະຖືກທຳລາຍ; ແລະ ໂສເພນີໃຫຍ່ຜູ້ນັ້ນ, ຜູ້ເຮັດໃຫ້ທາງທີ່ຖືກຕ້ອງຂອງພຣະຜູ້ເປັນເຈົ້າບິດເບືອນໄປ, ແທ້ຈິງແລ້ວ, ສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງຈະເພພັງລົງຢູ່ [ງ]ພື້ນດິນ ແລະ ການຕົກຂອງມັນຈະໃຫຍ່ຫລວງທີ່ສຸດ.

15 ເພາະຈົ່ງເບິ່ງ, ສາດສະດາໄດ້ກ່າວວ່າ, ເວລາຈະມາເຖິງຢ່າງວ່ອງໄວຄື ຊາຕານຈະ

9 *ກ* 1 ນຟ 14:1–5.
*ຂ* 2 ນຟ 30:1–7.
*ຄ* 2 ນຟ 29:13–14.
*ງ* ພບຍ 4:31.
*ຈ* ຄມພ ພັນທະສັນຍາຂອງອັບຣາຮາມ.
*ສ* ປຖກ 12:2–3; 3 ນຟ 20:27; ອຣຣ 2:9–11.
10 *ກ* ອຊຢ 52:10.
12 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* ຄມພ ຄວາມມືດທາງວິນຍານ.
*ຄ* 2 ນຟ 6:10–11.
*ງ* ຄມພ ພຣະຜູ້ຊ່ວຍໃຫ້ລອດ.
*ຈ* ຄມພ ເຢໂຮວາ.
13 *ກ* ຄມພ ມານ—ສາດສະໜາຈັກຂອງມານ.
*ຂ* 1 ນຟ 14:3, 15–17.
*ຄ* 1 ນຟ 21:26.
14 *ກ* ລກ 21:10.
*ຂ* ອຊຢ 60:12; 1 ນຟ 14:3; ຄພ 109:25.
*ຄ* 2 ນຟ 10:13; 27:3.
*ງ* ອຊຢ 25:12.

ບໍ່ມີອຳນາດເໜືອໃຈຂອງລູກຫລານມະນຸດ
ອີກ; ເພາະວັນເວລາຈະມາເຖິງໃນບໍ່ຊ້ານີ້
ເມື່ອຄົນທີ່ອວດດີ ແລະ ຄົນທີ່ເຮັດຄວາມ
ຊົ່ວຮ້າຍ ຈະເປັນຄືກັນກັບ [ກ]ເຟືອງເຂົ້າ;
ແລະ ວັນເວລາຈະມາເຖິງເມື່ອພວກເຂົາ
ຈະຕ້ອງຖືກ [ຂ]ໄຟເຜົາ.
16 ເພາະວັນເວລາຈະມາເຖິງໃນບໍ່ຊ້າ
ນີ້ ຄື ຄວາມສົມບູນຂອງ [ກ]ພຣະພິໂລດ
ຂອງພຣະເຈົ້າຈະເທລົງມາເທິງລູກຫລານ
ມະນຸດທຸກຄົນ; ເພາະພຣະອົງຈະບໍ່ຍອມ
ໃຫ້ຄົນຊົ່ວມາທຳລາຍຄົນຊອບທຳ.
17 ດັ່ງນັ້ນ, ພຣະອົງຈະ [ກ]ຮັກສາ [ຂ]ຄົນ
ຊອບທຳໄວ້ໃນອຳນາດຂອງພຣະອົງເຖິງ
ແມ່ນຈະເປັນໄປວ່າ ຄວາມສົມບູນຂອງ
ພຣະພິໂລດຂອງພຣະອົງຕ້ອງມາເຖິງ
ແລະ ຄົນຊອບທຳຈະໄດ້ຮັບການຮັກສາ
ເຖິງແມ່ນຈະເປັນການທຳລາຍສັດຕູຂອງ
ພວກເຂົາດ້ວຍໄຟ. ດັ່ງນັ້ນຄົນຊອບທຳບໍ່
ຕ້ອງຢ້ານກົວ ເພາະສາດສະດາໄດ້ກ່າວໄວ້
ວ່າ, ພວກເຂົາຈະລອດເຖິງແມ່ນວ່າມັນຈະ
ເປັນຄືກັນກັບໄຟກໍຕາມ.
18 ຈົ່ງ ເບິ່ງ, ພວກອ້າຍຂອງເຮົາເອີຍ,
ເຮົາເວົ້າກັບພວກເຈົ້າວ່າ ສິ່ງເຫລົ່ານີ້ຈະ
ຕ້ອງມາເຖິງໃນບໍ່ຊ້ານີ້; ແທ້ຈິງແລ້ວ, ແມ່ນ
ເລືອດກັບໄຟ, ແລະ ອາຍຄວັນຈະຕ້ອງມາ
ເຖິງ; ແລະ ມັນຈະຕ້ອງມີຂຶ້ນໃນພື້ນແຜ່ນ
ດິນໂລກນີ້; ແລະ ມັນຈະມາເຖິງມະນຸດ
ຕາມທາງເນື້ອໜັງຖ້າຫາກພວກເຂົາເຮັດ
ໃຈແຂງກະດ້າງຕໍ່ພຣະຜູ້ບໍລິສຸດຂອງ
ອິດສະຣາເອນ.
19 ຈົ່ງ ເບິ່ງ, ຄົນ ຊອບ ທຳ ຈະ ບໍ່ ຕາຍ;
ເພາະເວລາຈະຕ້ອງມາເຖິງຢ່າງແນ່ນອນຄື
ທຸກຄົນທີ່ຕໍ່ຕ້ານຊີໂອນຈະຖືກຕັດອອກ.
20 ແລະ ພຣະຜູ້ເປັນເຈົ້າຈະຕຽມທາງໄວ້
ໃຫ້ຜູ້ຄົນຂອງພຣະອົງຢ່າງແນ່ນອນ ເພື່ອ
ໃຫ້ຄຳເວົ້າຂອງໂມເຊສຳເລັດ, ຊຶ່ງເພິ່ນໄດ້
ກ່າວໄວ້ ມີຄວາມວ່າ: ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງເຈົ້າຈະຍົກ [ກ]ສາດສະ
ດາທ່ານໜຶ່ງຂຶ້ນຄືກັນກັບຂ້າພະເຈົ້າໃຫ້
ເຈົ້າ; ເຈົ້າຈະໄດ້ຍິນຈາກເພິ່ນຜູ້ນັ້ນທຸກຢ່າງ
ບໍ່ວ່າເລື່ອງອັນໃດກໍຕາມທີ່ເພິ່ນຜູ້ນັ້ນເວົ້າ
ກັບເຈົ້າ. ແລະ ເຫດການຈະບັງເກີດຂຶ້ນຄື
ຜູ້ໃດທີ່ບໍ່ຟັງສາດສະດາຜູ້ນັ້ນຈະຖືກ [ຂ]ຕັດ
ອອກຈາກບັນດາຜູ້ຄົນ.
21 ແລະ ບັດນີ້ຂ້າພະເຈົ້ານີໄຟປະກາດ
ກັບພວກເຈົ້າວ່າ [ກ]ສາດສະດາຜູ້ທີ່ໂມເຊ
ເວົ້າເຖິງຄື ພຣະຜູ້ບໍລິສຸດຂອງອິດສະ
ຣາເອນ; ດັ່ງນັ້ນ, ພຣະອົງຈະກະທຳ [ຂ]ການ
ພິພາກສາດ້ວຍຄວາມຊອບທຳ.
22 ແລະ ຄົນຊອບທຳບໍ່ຕ້ອງຢ້ານກົວ
ເພາະພວກເຂົາຄືຜູ້ທີ່ຈະບໍ່ຖືກທຳລາຍ, ແຕ່
ຈະເປັນອານາຈັກຂອງມານ ຊຶ່ງມັນຈະຖືກ
ສ້າງຂຶ້ນໃນບັນດາລູກຫລານມະນຸດ, ຊຶ່ງ
ອານາຈັກນັ້ນຖືກສະຖາປະນາຂຶ້ນໃນບັນ
ດາຜູ້ຄົນທີ່ຢູ່ໃນເນື້ອໜັງ—
23 ເພາະວັນເວລາຈະມາເຖິງຢ່າງວ່ອງ
ໄວຄື ເມື່ອ [ກ]ສາດສະໜາຈັກທຸກແຫ່ງທີ່
ສ້າງຂຶ້ນເພື່ອຫາຜົນປະໂຫຍດ, ແລະ ສາດ

15 *ກ* ອຊຢ 5:23–24;
ນຣ 1:10;
ມລກ 4:1;
2 ນຟ 15:24; 26:4–6;
ຄພ 64:23–24; 133:64.
*ຂ* ພສສ 21:9;
3 ນຟ 25:1;
ຄພ 29:9.
ຄມພ ແຜ່ນດິນໂລກ—ການ
ຊຳລະລ້າງແຜ່ນດິນໂລກ.
16 *ກ* 1 ນຟ 14:17.
17 *ກ* 2 ນຟ 30:10;
ມຊ 7:61.
*ຂ* 1 ນຟ 17:33–40.
20 *ກ* ຢຣ 4:19; 7:40.
*ຂ* ຄພ 133:63.
21 *ກ* ພບຍ 18:15, 18;
ກຈກ 3:20–23;
1 ນຟ 10:4;
3 ນຟ 20:23.
*ຂ* ພສສ 98:9;
ມຊ 6:57.
23 *ກ* 1 ນຟ 14:10;
2 ນຟ 26:20.
ຄມພ ການຫລອກລວງ
ຂອງປະໂລຫິດ.

ສະໜາຈັກທີ່ສ້າງຂຶ້ນເພື່ອມີອຳນາດທາງ
ເນື້ອໜັງ, ແລະ ສາດສະໜາຈັກທີ່ສ້າງ
ຂຶ້ນເພື່ອເປັນທີ່ [ຂ]ນິຍົມໃນສາຍຕາຂອງ
ໂລກ, ແລະ ສາດສະໜາຈັກທີ່ສະແຫວງ
ຫາຄວາມໂລບມາກທາງເນື້ອໜັງ ແລະ
ສິ່ງຂອງທາງໂລກ ແລະ ເຮັດຄວາມຊົ່ວ
ຮ້າຍນາງໆປະການ; ແທ້ຈິງແລ້ວ, ໂດຍ
ສະຫລຸບ, ພວກທີ່ເປັນອານາຈັກຂອງມານ
ຄື ຜູ້ທີ່ຕ້ອງຢ້ານກົວຕົວສັ່ນ ແລະ [ຄ]ຫວັ່ນ
ໄຫວ, ພວກເຂົາຈະຕ້ອງຖືກນຳລົງຕ່ຳຢູ່
ພື້ນດິນ; ພວກເຂົາຈະຕ້ອງຖືກ [ງ]ໄຟເຜົາຄື
ກັນກັບເຟືອງເຂົ້າ ແລະ ນີ້ຈະເປັນຕາມຄຳ
ເວົ້າຂອງສາດສະດາ.
24 ແລະ ວັນເວລາຈະມາເຖິງຢ່າງວ່ອງ
ໄວຄື ຄົນຊອບທຳຈະຕ້ອງຖືກພາຂຶ້ນໄປຄື
ກັນກັບ [ກ]ລູກງົວໃນຄອກ ແລະ ພຣະຜູ້ບໍລິ
ສຸດຂອງອິດສະຣາເອນຈະປົກຄອງດ້ວຍ
ລິດເດດ, ດ້ວຍອຳນາດ ແລະ ລັດສະໝີ
ພາບອັນຍິ່ງໃຫຍ່.
25 ແລະ ພຣະອົງຈະ [ກ]ເຕົ້າໂຮມລູກ
ຫລານຂອງພຣະອົງຈາກສີ່ສ່ວນຂອງແຜ່ນ
ດິນໂລກ ແລະ ພຣະອົງຈະນັບຈຳນວນ
ແກະຂອງພຣະອົງ, ແລະ ພວກເຂົາກໍຈະ
ຮູ້ຈັກພຣະອົງ ແລະ ຈະມີແກະຄອກດຽວ
ແລະ ມີ [ຂ]ຜູ້ລ້ຽງຜູ້ດຽວ, ແລະ ພຣະອົງຈະ
ລ້ຽງແກະຂອງພຣະອົງ, ແລະ ໃນຕົວຂອງ
ພຣະອົງ ພວກເຂົາຈະພົບ [ຄ]ທົ່ງຫຍ້າ.
26 ແລະ ເພາະຄວາມຊອບທຳຂອງຜູ້
ຄົນຂອງພຣະອົງ, [ກ]ຊາຕານຈຶ່ງບໍ່ມີອຳນາດ;
ດັ່ງນັ້ນ, ມັນຈຶ່ງຫລຸດອອກມາບໍ່ໄດ້ເປັນ
ເວລາ [ຂ]ຫລາຍປີ ເພາະມັນບໍ່ມີອຳນາດ
ເໜືອໃຈຂອງຜູ້ຄົນ; ເພາະພວກເຂົາຢູ່ໃນ
ຄວາມຊອບທຳ ແລະ ພຣະຜູ້ບໍລິສຸດຂອງ
ອິດສະຣາເອນ [ຄ]ປົກຄອງ.
27 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້ານີໄຟ
ກ່າວກັບພວກເຈົ້າວ່າ ເລື່ອງທັງໝົດນີ້ຕ້ອງ
ມາເຖິງຕາມທາງຝ່າຍເນື້ອໜັງ.
28 ແຕ່, ຈົ່ງເບິ່ງ, ທຸກປະຊາຊາດ, ທຸກຕະ
ກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ
ຈະຢູ່ຢ່າງປອດໄພໃນ ພຣະຜູ້ບໍລິສຸດຂອງ
ອິດສະຣາເອນ ຖ້າຫາກເປັນໄປວ່າພວກ
ເຂົາຈະ [ກ]ກັບໃຈ.
29 ແລະ ບັດນີ້ຂ້າພະເຈົ້ານີໄຟຂໍຈົບ
ພຽງເທົ່ານີ້; ເພາະວ່າເຮົາບໍ່ກ້າເວົ້າກ່ຽວກັບ
ເລື່ອງເຫລົ່ານີ້ອີກຕໍ່ໄປ.
30 ດັ່ງນັ້ນ, ພວກອ້າຍຂອງເຮົາເອີຍ,
ເຮົາຢາກໃຫ້ພວກເຈົ້າພິຈາລະນາວ່າ
ເລື່ອງຊຶ່ງມີຂຽນໄວ້ໃນ [ກ]ແຜ່ນຈາລຶກທອງ
ເຫລືອງນີ້ເປັນຄວາມຈິງ; ແລະ ມັນໃຫ້
ຖ້ອຍຄຳວ່າມະນຸດຕ້ອງເຊື່ອຟັງພຣະບັນ
ຍັດຂອງພຣະເຈົ້າ.
31 ດັ່ງນັ້ນ, ພວກເຈົ້າບໍ່ຕ້ອງຄິດວ່າເຮົາ
ກັບບິດາຂອງເຮົາເທົ່ານັ້ນທີ່ເປັນຜູ້ໃຫ້ຖ້ອຍ
ຄຳ ແລະ ສິດສອນສິ່ງເຫລົ່ານີ້. ດັ່ງນັ້ນ, ຖ້າ
ພວກເຈົ້າຈະເຊື່ອຟັງ [ກ]ພຣະບັນຍັດ ແລະ
ອົດທົນຈົນເຖິງທີ່ສຸດ, ພວກເຈົ້າຈະລອດ
ໃນວັນສຸດທ້າຍ. ແລະ ເປັນໄປດັ່ງນັ້ນ. ອາ
ແມນ.

---

23 *ຂ* ລກ 6:26; ແອວ 1:3.
*ຄ* 2 ນຟ 28:19.
*ງ* 2 ນຟ 26:6.
24 *ກ* ອມ 6:4; ມລກ 4:2; 3 ນຟ 25:2.
25 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* ຄມພ ຜູ້ລ້ຽງທີ່ດີ.
*ຄ* ພສສ 23.
26 *ກ* ພນມ 20:2; ແອວ 48:17; ຄພ 43:31; 45:55; 88:110; 101:28. ຄມພ ມານ.
*ຂ* ຢຄ 5:76.
*ຄ* ຄມພ ພັນປີ.
28 *ກ* ຄມພ ກັບໃຈ, ການກັບໃຈ; ອະໄພ, ໃຫ້ອະໄພ.
30 *ກ* 2 ນຟ 4:2.
31 *ກ* ມທ 19:17. ຄມພ ພຣະບັນຍັດຂອງພຣະເຈົ້າ.

# ໜັງສືນີໄຟສະບັບທີສອງ

ເລື່ອງລາວກ່ຽວກັບການມໍລະນະກຳຂອງລີໄຮ. ພວກອ້າຍຂອງນີໄຟກະບົດຕໍ່ເພິ່ນ. ພຣະຜູ້ເປັນເຈົ້າໄດ້ເຕືອນນີໄຟໃຫ້ອອກໄປໃນຖິ່ນແຫ້ງແລ້ງກັນດານ. ການເດີນທາງຂອງເພິ່ນໃນຖິ່ນແຫ້ງແລ້ງກັນດານ, ແລະ ອື່ນໆ.

## ບົດທີ 1

*ລີໄຮທຳນາຍກ່ຽວກັບແຜ່ນດິນແຫ່ງເສລີພາບ—ລູກຫລານຂອງເພິ່ນຈະກະຈັດກະຈາຍໄປ ແລະ ຈະຖືກລົງທັນຖ້າຫາກວ່າພວກເຂົາປະຕິເສດພຣະຜູ້ບໍລິສຸດຂອງອິດສະຣາເອນ—ເພິ່ນຊັກຊວນພວກລູກຊາຍຂອງເພິ່ນ ໃຫ້ສວມຍຸດທະພັນແຫ່ງຄວາມຊອບທຳ. ປະມານ 588–570 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກຂ້າພະເຈົ້ານີໄຟໄດ້ສິດສອນ
ພວກອ້າຍຂອງຂ້າພະເຈົ້າແລ້ວ, ລີໄຮ
[ກ]ບິດາຂອງພວກເຮົາໄດ້ເວົ້າກັບພວກເຂົາ
ຫລາຍເລື່ອງອີກ ແລະ ໄດ້ທວນຄືນກັບ
ພວກເຂົາວ່າ ພຣະຜູ້ເປັນເຈົ້າໄດ້ກະທຳ
ສິ່ງທີ່ຍິ່ງໃຫຍ່ພຽງໃດສຳລັບພວກເຂົາໃນ
ການນຳພວກເຂົາອອກຈາກແຜ່ນດິນເຢຣູ
ຊາເລັມ.
2 ແລະ ເພິ່ນໄດ້ເວົ້າກັບພວກເຂົາເຖິງ
[ກ]ການກະບົດຂອງພວກເຂົາເວລາຢູ່ໃນຜືນ
ນ້ຳນັ້ນ ແລະ ພຣະເມດຕາຂອງພຣະເຈົ້າທີ່
ໄວ້ຊີວິດຂອງພວກເຂົາ, ເພື່ອພວກເຂົາຈະ
ບໍ່ຖືກກືນລົງໄປໃນທະເລ.
3 ແລະ ເພິ່ນໄດ້ເວົ້າກັບພວກເຂົາອີກ
ເຖິງແຜ່ນດິນແຫ່ງຄຳສັນຍາ ຊຶ່ງພວກເຂົາ
ໄດ້ຮັບ—ວ່າພຣະເຈົ້າມີຄວາມເມດຕາພຽງ
ໃດທີ່ໄດ້ເຕືອນພວກເຮົາໃຫ້ພວກເຮົາໜີ
ອອກຈາກແຜ່ນດິນເຢຣູຊາເລັມ.
4 ເພາະຈົ່ງເບິ່ງ ເພິ່ນໄດ້ເວົ້າວ່າ ພໍ່ໄດ້
ເຫັນ [ກ]ພາບນິມິດພາບໜຶ່ງ, ໃນພາບນັ້ນ
ພໍ່ຮູ້ວ່າ [ຂ]ເຢຣູຊາເລັມໄດ້ຖືກທຳລາຍແລ້ວ
ແລະ ຖ້າພວກເຮົາຍັງຢູ່ໃນເມືອງເຢຣູ
ຊາເລັມພວກເຮົາກໍຈະ [ຄ]ຕາຍຄືກັນ.
5 ແຕ່ເພິ່ນໄດ້ເວົ້າວ່າ ທັງທີ່ມີຄວາມທຸກ,
ພວກເຮົາຍັງໄດ້ຮັບ [ກ]ແຜ່ນດິນແຫ່ງຄຳ
ສັນຍາ ຊຶ່ງເປັນແຜ່ນດິນແຫ່ງໜຶ່ງທີ່ [ຂ]ປະ
ເສີດເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ;
ເປັນແຜ່ນດິນທີ່ອົງພຣະຜູ້ເປັນເຈົ້າໄດ້ເຮັດ
ພັນທະສັນຍາກັບພໍ່ວ່າ ຈະເປັນແຜ່ນດິນ
ມູນມໍລະດົກຂອງລູກຫລານຂອງພໍ່. ແທ້ຈິງ
ແລ້ວ, ພຣະຜູ້ເປັນເຈົ້າໃຫ້ແຜ່ນດິນນີ້ເປັນ
[ຄ]ພັນທະສັນຍາກັບພໍ່ ແລະ ກັບລູກຫລານ
ຂອງພໍ່ຕະຫລອດການ, ແລະ ກັບຄົນທັງ
ໝົດທີ່ພຣະຫັດຂອງພຣະຜູ້ເປັນເຈົ້າຈະນຳ
ອອກຈາກປະເທດອື່ນໆອີກ.
6 ດັ່ງນັ້ນພໍ່, ລີໄຮ, ຈຶ່ງທຳນາຍຕາມການ
ກະທຳຂອງພຣະວິນຍານ ຊຶ່ງຢູ່ໃນພໍ່ວ່າ ຈະ
[ກ]ບໍ່ມີຜູ້ໃດເຂົ້າມາຢູ່ໃນແຜ່ນດິນນີ້ໄດ້ ນອກ
ຈາກຈະເປັນພຣະຫັດຂອງພຣະຜູ້ເປັນເຈົ້າ

**1** 1 *ກ* ຄມພ ປິຕຸ, ແຫ່ງປິຕຸ.
2 *ກ* 1 ນຟ 18:9–20.
4 *ກ* ຄມພ ພາບນິມິດ.
*ຂ* 2 ກສ 24:14–15; ຢມຢ 44:2; 1 ນຟ 1:4; ຮລມ 8:20.
*ຄ* ແອວ 9:22.
5 *ກ* ຄມພ ແຜ່ນດິນແຫ່ງຄຳສັນຍາ.
*ຂ* ອທ 2:9–10.
*ຄ* ຄມພ ພັນທະສັນຍາ.
6 *ກ* 2 ນຟ 10:22.

ຊົງນຳເຂົາມາເທົ່ານັ້ນ.
7 ດັ່ງນັ້ນ *ກ*ແຜ່ນດິນນີ້ຈຶ່ງຖືກຕັ້ງໄວ້ເພື່ອ
ຄົນທີ່ພຣະອົງຈະນຳມາ. ແລະ ຖ້າຫາກ
ເປັນໄປວ່າພວກເຂົາຈະຮັບໃຊ້ພຣະອົງ
ຕາມພຣະບັນຍັດທີ່ປະທານໄວ້, ມັນຈະ
ເປັນແຜ່ນດິນແຫ່ງ *ຂ*ເສລີພາບສຳລັບພວກ
ເຂົາ; ດັ່ງນັ້ນ, ພວກເຂົາຈະບໍ່ຖືກນຳລົງໄປ
ເປັນຊະເລີຍ; ຖ້າຫາກເປັນເຊັ່ນນັ້ນ, ກໍເປັນ
ເພາະຄວາມຊົ່ວຮ້າຍ ເພາະຖ້າຫາກຄວາມ
ຊົ່ວຮ້າຍມີຢູ່ທົ່ວໄປ ແຜ່ນດິນນີ້ຈະຖືກ
*ຄ*ສາບແຊ່ງໃຫ້ແກ່ພວກເຂົາ, ແຕ່ສຳລັບຄົນ
ຊອບທຳ ມັນຈະເປັນພອນຕະຫລອດການ.
8 ແລະ ຈົ່ງເບິ່ງ, ມັນເປັນຄວາມສະຫລຽວ
ສະຫລາດທີ່ແຜ່ນດິນນີ້ໄດ້ຖືກຮັກສາໄວ້ ທີ່
ບໍ່ໃຫ້ປະຊາຊາດອື່ນຮູ້ ເພາະຈົ່ງເບິ່ງຫລາຍ
ປະຊາຊາດຈະເຂົ້າມາຢຽບຢ່ຳແຜ່ນດິນນີ້
ຈົນວ່າມັນບໍ່ມີບ່ອນເປັນມູນມໍລະດົກເລີຍ.
9 ດັ່ງນັ້ນພໍ່, ລີໄຮ, ໄດ້ຮັບຄຳສັນຍາວ່າ
*ກ*ຕາບໃດຜູ້ທີ່ອົງພຣະຜູ້ເປັນເຈົ້າຊົງນຳ
ອອກຈາກແຜ່ນດິນເຢຣູຊາເລັມ ຈະຮັກສາ
ພຣະບັນຍັດຂອງພຣະອົງ, ພວກເຂົາຈະ
*ຂ*ຮຸ່ງເຮືອງຢູ່ໃນແຜ່ນດິນນີ້; ແລະ ພວກເຂົາ
ຈະໄດ້ຮັບການປົກປັກຮັກສາໃຫ້ພົ້ນຈາກ
ປະຊາຊາດອື່ນໆທັງສິ້ນ, ເພື່ອພວກເຂົາຈະ
ໄດ້ແຜ່ນດິນນີ້ເປັນຂອງຕົນ ແລະ ຖ້າຫາກ
ເປັນໄປວ່າ ພວກເຂົາຈະ *ຄ*ຮັກສາພຣະບັນ
ຍັດຂອງພຣະອົງ, ພວກເຂົາຈະໄດ້ຮັບພອນ
ຢູ່ໃນແຜ່ນດິນນີ້, ແລະ ຈະບໍ່ມີຜູ້ໃດບຽດ
ບຽນພວກເຂົາ ຫລື ຈະເອົາແຜ່ນດິນ ຊຶ່ງ
ເປັນມູນມໍລະດົກຂອງພວກເຂົາໄປ ແລະ
ພວກເຂົາຈະຢູ່ຢ່າງປອດໄພຕະຫລອດໄປ.
10 ແຕ່ຈົ່ງເບິ່ງ, ເມື່ອເວລານັ້ນມາເຖິງ ທີ່
ພວກເຂົາຈະເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອ
ຖື, ຫລັງຈາກພວກເຂົາໄດ້ຮັບພອນອັນຍິ່ງ
ໃຫຍ່ຈາກພຣະຫັດຂອງພຣະຜູ້ເປັນເຈົ້າ—
ໂດຍມີຄວາມຮູ້ເຖິງການສ້າງໂລກ ແລະ
ມະນຸດທັງປວງຮູ້ເຖິງວຽກງານອັນຍິ່ງໃຫຍ່
ແລະ ໜ້າອັດສະຈັນຂອງພຣະຜູ້ເປັນເຈົ້າ
ຕັ້ງແຕ່ການສ້າງໂລກ, ມີອຳນາດທີ່ປະທານ
ໃຫ້ພວກເຂົາເພື່ອເຮັດທຸກສິ່ງທຸກຢ່າງດ້ວຍ
ສັດທາ; ມີພຣະບັນຍັດທຸກປະການຕັ້ງແຕ່
ຕົ້ນ, ແລະ ໄດ້ຮັບການນຳມາໂດຍພຣະ
ກະລຸນາທິຄຸນອັນຫາທີ່ປຽບບໍ່ໄດ້ ເຂົ້າມາ
ສູ່ແຜ່ນດິນແຫ່ງຄຳສັນຍາອັນມີຄຸນຄ່ານີ້—
ຈົ່ງເບິ່ງ, ພໍ່ຂໍເວົ້າວ່າ ຖ້າຫາກວັນນັ້ນມາເຖິງ
ທີ່ພວກເຂົາຈະປະຕິເສດພຣະຜູ້ບໍລິສຸດ
ຂອງອິດສະຣາເອນ, *ກ*ພຣະເມຊີອາອົງແທ້
ຈິງ, ຊຶ່ງເປັນພຣະຜູ້ໄຖ່ຂອງພວກເຂົາ ແລະ
ພຣະເຈົ້າຂອງພວກເຂົາ, ຈົ່ງເບິ່ງ, ການພິ
ພາກສາອັນທ່ຽງທຳຂອງພຣະອົງຈະຢູ່ເທິງ
ພວກເຂົາ.
11 ແທ້ຈິງແລ້ວ, ພຣະອົງຈະຊົງນຳ *ກ*ປະ
ຊາຊາດອື່ນໆມາຫາພວກເຂົາ, ແລະ ພຣະ
ອົງຈະປະທານອຳນາດໃຫ້ແກ່ພວກນັ້ນ,
ແລະ ພຣະອົງຈະເອົາແຜ່ນດິນທີ່ເປັນຂອງ
ພວກເຂົາໄປຈາກພວກເຂົາ, ແລະ ພຣະອົງ
ຈະເຮັດໃຫ້ພວກເຂົາ *ຂ*ກະຈັດກະຈາຍໄປ
ແລະ ຖືກລົງທັນ.
12 ແທ້ຈິງແລ້ວ, ເມື່ອລຸ້ນໜຶ່ງຜ່ານໄປ
ເຖິງອີກລຸ້ນໜຶ່ງ, ມັນຈະເກີດມີ *ກ*ການນອງ
ເລືອດ ແລະ ຈະມີການມາຢ້ຽມຢາມຄັ້ງຍິ່ງ
ໃຫຍ່ໃນບັນດາພວກເຂົາ; ດັ່ງນັ້ນ, ລູກຂອງ

7 *ກ* ມຊຢ 29:32; ແອວ 46:10, 20.
*ຂ* 2 ນຟ 10:11. ຄນພ ເສລີພາບ.
*ຄ* ແອວ 45:10–14, 16; ມມ 1:17; ອທ 2:8–12.
9 *ກ* 2 ນຟ 4:4; ແອວ 9:13.
*ຂ* ພບຍ 29:9.
*ຄ* ຄນພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
10 *ກ* ຄນພ ພຣະເມຊີອາ.
11 *ກ* 1 ນຟ 13:12–20; ມມ 5:19–20.
*ຂ* 1 ນຟ 22:7.
12 *ກ* ມມ 1:11–19; 4:11.

ພໍ່, ພໍ່ຢາກໃຫ້ລູກຈື່ຈຳໄວ້; ແທ້ຈິງແລ້ວ, ພໍ່
ຢາກໃຫ້ລູກເຊື່ອຟັງຄຳເວົ້າຂອງພໍ່.

13 ໂອ້, ໃຫ້ລູກຕື່ນ; ຕື່ນຈາກການ
ນອນຫລັບຢ່າງແຈບຈົມນັ້ນເຖີດ, ແທ້ຈິງ
ແລ້ວ, ເຖິງແມ່ນຈາກການນອນຫລັບຂອງ
[ກ]ນະລົກ ແລະ ສັ່ນ [ຂ]ສາຍໂສ້ອັນເປັນຕາ
ຢ້ານຊຶ່ງຜູກມັດລູກໃຫ້ຫລຸດອອກ ຊຶ່ງເປັນ
ສາຍໂສ້ທີ່ຜູກມັດລູກຫລານມະນຸດ, ຊຶ່ງນຳ
ພວກເຂົາລົງໄປເປັນຊະເລີຍໃນ [ຄ]ເຫວເລິກ
ແຫ່ງຄວາມທຸກທໍລະມານ ແລະ ວິບັດຊົ່ວນິ
ລັນດອນ.

14 ຈົ່ງຕື່ນເຖີດ ແລະ ຈົ່ງລຸກຂຶ້ນຈາກພື້ນ
ດິນ, ແລະ ຟັງຄຳເວົ້າຂອງ [ກ]ພໍ່ທີ່ກຳລັງສັ່ນ
ຢູ່ ຊຶ່ງໃນບໍ່ຊ້າລູກຈະຕ້ອງເອົາແຂນຂາໄປ
ວາງໄວ້ໃນ [ຂ]ຫລຸມສົບອັນເຢັນ ແລະ ງຽບ
ສະຫງັດ ຊຶ່ງຈາກບ່ອນນັ້ນບໍ່ມີຜູ້ເດີນທາງ
ຄົນໃດກັບມາໄດ້; ແລະ ອີກບໍ່ພໍເທົ່າໃດມື້ພໍ່
ກໍຈະໄປຕາມ [ຄ]ທາງຂອງມວນໂລກທັງປວງ
ແລ້ວ.

15 ແຕ່ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ [ກ]ໄຖ່
ຈິດວິນຍານຂອງພໍ່ຈາກນະລົກ; ພໍ່ໄດ້ເຫັນ
ລັດສະໝີພາບຂອງພຣະອົງ ແລະ ພໍ່ໄດ້
ຖືກລ້ອມໄວ້ໃນອ້ອມ [ຂ]ພຣະພາຫາແຫ່ງ
[ຄ]ຄວາມຮັກຂອງພຣະອົງຊົ່ວນິລັນດອນ.

16 ແລະ ພໍ່ປາດຖະໜາຢາກໃຫ້ລູກຈື່ຈຳ
ທີ່ຈະປະຕິບັດຕາມ [ກ]ຂໍ້ກຳນົດ ແລະ ການ
ພິພາກສາຂອງພຣະຜູ້ເປັນເຈົ້າ; ຈົ່ງເບິ່ງ, ນີ້
ແມ່ນຄວາມຫ່ວງໃຍຂອງຈິດວິນຍານຂອງ
ພໍ່ມາຕັ້ງແຕ່ຕົ້ນ.

17 ໃຈຂອງພໍ່ຖືກຖ່ວງລົງເພາະຄວາມ
ເສົ້າສະຫລົດໃຈເປັນບາງຄັ້ງ, ເພາະພໍ່ຢ້ານ
ກົວຄວາມແຂງກະດ້າງເພາະໃຈຂອງລູກ,
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງລູກ
ຈະສະເດັດມາດ້ວຍຄວາມສົມບູນແຫ່ງ
[ກ]ພຣະພິໂລດໃຫ້ລູກ ຈົນວ່າລູກຖືກ [ຂ]ຕັດ
ອອກ ແລະ ຖືກທຳລາຍຕະຫລອດການ;

18 ຫລືວ່າ, ຄຳສາບແຊ່ງຈະມາເຖິງລູກ
ເປັນເວລາ [ກ]ຫລາຍລຸ້ນຄົນ; ແລະ ລູກຈະ
ຖືກຢ້ຽມຢາມດ້ວຍດາບ ແລະ ດ້ວຍຄວາມ
ອຶດຢາກ, ແລະ ຖືກກຽດຊັງ, ແລະ ນຳໄປ
ຕາມຄວາມປະສົງ ແລະ ເປັນຊະເລີຍຂອງ
[ຂ]ມານ.

19 ໂອ້ ລູກຂອງພໍ່, ເພື່ອວ່າສິ່ງເຫລົ່າ
ນີ້ຈະບໍ່ໄດ້ມາເຖິງລູກ, ແຕ່ເພື່ອໃຫ້ລູກ
ໄດ້ເປັນຜູ້ຖືກຄັດເລືອກ ແລະ ເປັນທີ່ຊົງ
[ກ]ໂປດປານຂອງພຣະຜູ້ເປັນເຈົ້າ. ແຕ່ຈົ່ງ
ເບິ່ງ, ພຣະປະສົງຂອງພຣະອົງຈະສຳເລັດ;
ເພາະ [ຂ]ທາງຂອງພຣະອົງເປັນທາງທີ່ຊອບ
ທຳຕະຫລອດໄປ.

20 ແລະ ພຣະອົງໄດ້ກ່າວວ່າ: [ກ]ຕາບໃດ
ທີ່ເຈົ້າຈະຮັກສາ [ຂ]ບັນຍັດຂອງເຮົາ ເຈົ້າຈະ
[ຄ]ຮຸ່ງເຮືອງຢູ່ໃນແຜ່ນດິນນັ້ນ; ແຕ່ຕາບໃດ
ທີ່ເຈົ້າຈະບໍ່ຮັກສາບັນຍັດຂອງເຮົາ ເຈົ້າຈະ
ຖືກຕັດອອກຈາກທີ່ປະທັບຂອງເຮົາ.

21 ແລະ ບັດນີ້, ເພື່ອຈິດວິນຍານຂອງພໍ່
ຈະມີຄວາມປິຕິຍິນດີໃນລູກ, ແລະ ເພື່ອໃຈ

---

13 *ກ* ຄມພ ນະລົກ.
*ຂ* ແອວ 12:9–11.
*ຄ* 1 ນຟ 15:28–30;
ຮລມ 3:29–30.
14 *ກ* ຄມພ ພໍ່ແມ່, ບິດາມານດາ.
*ຂ* ຄມພ ຄວາມຕາຍ
ທາງຮ່າງກາຍ.
*ຄ* ຢຊ 23:14.
15 *ກ* ແອວ 36:28.
ຄມພ ຊົດໃຊ້, ການຊົດໃຊ້.
*ຂ* ຢຄ 6:5;
ແອວ 5:33;
3 ນຟ 9:14.
*ຄ* ຣມ 8:39.
ຄມພ ຮັກ, ຄວາມຮັກ.
16 *ກ* ພບຍ 4:5–8;
2 ນຟ 5:10–11.
17 *ກ* 2 ນຟ 5:21–24;
ແອວ 3:6–19.
*ຂ* ມຊຢ 12:8.
18 *ກ* 1 ນຟ 12:20–23.
*ຂ* ຄມພ ມານ.
19 *ກ* ຄມພ ຜູ້ທີ່ຖືກເລືອກ.
*ຂ* ຣສອ 14:9.
20 *ກ* ຈຣ 1:9; ມຊຢ 1:6–7;
ແອວ 9:13–14.
*ຂ* ລລວ 26:3–14;
ຢອ 2:23–26.
*ຄ* ພສສ 67:6;
ມຊຢ 2:21–25.

ຂອງພໍ່ຈະຈາກໂລກນີ້ໄປດ້ວຍຄວາມຍິນ
ດີ, ເພື່ອພໍ່ຈະບໍ່ຖືກນຳລົງສູ່ຫລຸມສົບດ້ວຍ
ຄວາມໂສກເສົ້າ ແລະ ຄວາມເສົ້າສະຫລົດ
ໃຈ, ສະນັ້ນຈົ່ງລຸກຂຶ້ນຈາກພື້ນດິນ, ລູກ
ຂອງພໍ່, ແລະ ເປັນ [ກ]ບຸລຸດ, ແລະ ຈົ່ງຕັ້ງໃຈ
[ຂ]ເດັດດ່ຽວ ແລະ ໃຈດຽວ, ສາມັກຄີກັນໃນ
ທຸກສິ່ງທຸກຢ່າງເພື່ອລູກຈະບໍ່ໄດ້ລົງໄປສູ່
ຄວາມເປັນຊະເລີຍ;
22 ເພື່ອລູກຈະບໍ່ຖືກສາບແຊ່ງດ້ວຍຄຳ
ສາບແຊ່ງຢ່າງສາຫັດ; ແລະ ເພື່ອລູກຈະບໍ່
ກໍ່ຄວາມບໍ່ພໍພຣະໄທຂອງພຣະເຈົ້າຜູ້ [ກ]ທ່ຽງ
ທຳໃຫ້ເກີດກັບລູກຈົນໄປສູ່ຄວາມພິນາດ
ອີກ; ແທ້ຈິງແລ້ວ, ຄວາມພິນາດນິລັນດອນ
ຂອງທັງ ຈິດວິນຍານ ແລະ ຮ່າງກາຍ.
23 ຕື່ນເຖີດ, ລູກຂອງພໍ່; ຈົ່ງຖື [ກ]ຍຸດທະ
ພັນແຫ່ງຄວາມຊອບທຳ. ສັ່ນສາຍໂສ້ທີ່ຜູກ
ມັດລູກໃຫ້ຫລຸດອອກ, ແລະ ອອກມາຈາກ
ການປິດບັງ, ແລະ ຈົ່ງລຸກຂຶ້ນຈາກພື້ນດິນ.
24 ຈົ່ງຢ່າກະບົດຕໍ່ນ້ອງຊາຍຂອງລູກອີກ
ຕໍ່ໄປ, ຊຶ່ງຄວາມຄິດເຫັນຂອງລາວປະເສີດ,
ແລະ ເປັນຜູ້ຮັກສາພຣະບັນຍັດມາຕັ້ງແຕ່
ເວລາທີ່ພວກເຮົາໄດ້ອອກຈາກເມືອງເຢຣູ
ຊາເລັມ; ແລະ ເປັນເຄື່ອງມືໃນພຣະຫັດ
ຂອງພຣະເຈົ້າໃນການນຳພວກເຮົາມາຫາ
ແຜ່ນດິນແຫ່ງຄຳສັນຍາ, ເພາະຖ້າບໍ່ແມ່ນ
ຍ້ອນລາວແລ້ວ, ພວກເຮົາກໍຕ້ອງຕາຍ
ເພາະ [ກ]ຄວາມຫິວຢູ່ໃນຖິ່ນແຫ້ງແລ້ງກັນ
ດານ; ເຖິງປານນັ້ນ, ລູກຍັງພະຍາຍາມ
ຈະ [ຂ]ເອົາຊີວິດຂອງລາວ; ແທ້ຈິງແລ້ວ,
ລາວໄດ້ທົນຮັບເອົາຄວາມເສົ້າສະຫລົດໃຈ
ຫລາຍເພາະລູກ.
25 ແລະ ພໍ່ຢ້ານກົວ ແລະ ຕົວສັ່ນຫລາຍ
ເພາະລູກ, ຍ້ອນຢ້ານວ່າລູກຈະລຳບາກ
ອີກ; ເພາະຈົ່ງເບິ່ງ, ລູກຫາວ່າລາວພະຍາ
ຍາມຊອກຫາອຳນາດ ແລະ [ກ]ສິດອຳນາດ
ເໜືອກວ່າລູກ; ແຕ່ພໍ່ຮູ້ວ່າລາວບໍ່ໄດ້ພະຍາ
ຍາມຊອກຫາອຳນາດ ແລະ ສິດອຳນາດ
ເໜືອກວ່າລູກເລີຍ, ແຕ່ລາວພະຍາຍາມ
ຊອກຫາລັດສະໝີພາບຂອງພຣະເຈົ້າ ແລະ
ຄວາມຜາສຸກນິລັນດອນຂອງລູກເອງ.
26 ແລະ ລູກໄດ້ຈົ່ມເພາະລາວກົງໄປກົງ
ມາກັບລູກ. ລູກເວົ້າວ່າລາວໄດ້ໃຊ້ [ກ]ຄວາມ
ຮຸນແຮງ; ລູກເວົ້າວ່າລາວໄດ້ຮ້າຍໃຫ້ລູກ;
ແຕ່ຈົ່ງເບິ່ງ, ຄວາມຮຸນແຮງຂອງລາວເປັນ
ຄວາມຮຸນແຮງຂອງອຳນາດແຫ່ງພຣະຄຳ
ຂອງພຣະເຈົ້າຊຶ່ງຢູ່ກັບລາວ; ແລະ ສິ່ງທີ່
ລູກເອີ້ນວ່າໃຈຮ້າຍນັ້ນຄືຄວາມຈິງຕາມ
ທີ່ຢູ່ໃນພຣະເຈົ້າ ຊຶ່ງລາວບັງຄັບບໍ່ໄດ້, ຊຶ່ງ
ລາວໄດ້ສະແດງໃຫ້ປະຈັກຢ່າງອາດຫານ
ເຖິງຄວາມຊົ່ວຮ້າຍຂອງລູກ.
27 ແລະ ມັນຈຶ່ງຈຳເປັນທີ່ [ກ]ອຳນາດຂອງ
ພຣະເຈົ້າຕ້ອງຢູ່ກັບລາວ, ເຖິງແມ່ນກັບຄຳ
ສັ່ງຂອງລາວທີ່ລູກຈະຕ້ອງເຊື່ອຟັງ. ແຕ່
ຈົ່ງເບິ່ງ, ບໍ່ແມ່ນລາວ, ແຕ່ແມ່ນ [ຂ]ພຣະວິນ
ຍານຂອງພຣະຜູ້ເປັນເຈົ້າ ຊຶ່ງຢູ່ກັບລາວທີ່
[ຄ]ເປີດປາກຂອງລາວໃຫ້ເວົ້າ ຊຶ່ງລາວປິດບໍ່
ໄດ້.
28 ແລະ ບັດນີ້ລູກຂອງພໍ່, ເລມັນ, ແລະ
ເລມູເອນ ແລະ ແຊມກໍຄືກັນ, ແລະ ລູກ
ຂອງພໍ່ຜູ້ເປັນລູກຂອງອິດຊະມາເອນກໍ
ເໝືອນກັນ, ຈົ່ງເບິ່ງ, ຖ້າຫາກລູກຈະເຊື່ອ
ຟັງສຽງຂອງນີໄຟ ລູກຈະບໍ່ຕາຍ. ແລະ

21 *ກ* 1 ຊມອ 4:9;
1 ກສ 2:2.
*ຂ* ມຊ 7:18.
22 *ກ* ຄພ 3:4.
23 *ກ* ອຟຊ 6:11–17.
24 *ກ* 1 ນຟ 16:32.
*ຂ* 1 ນຟ 16:37.
25 *ກ* ປຖກ 37:9–11.
26 *ກ* ສພສ 15:10;
1 ນຟ 16:2;
ມຣນ 9:4;
ຄພ 121:41–43.
27 *ກ* 1 ນຟ 17:48.
*ຂ* ຄພ 121:43.
*ຄ* ຄພ 33:8.

ຖ້າຫາກລູກເຊື່ອຟັງຄວາມລາວ ພໍ່ຈະໃຫ້
[ກ]ພອນແກ່ລູກ, ແທ້ຈິງແລ້ວ, ແມ່ນພອນປະ
ການທຳອິດຂອງພໍ່.
29 ແຕ່ຖ້າຫາກລູກບໍ່ເຊື່ອຟັງຄວາມຂອງ
ລາວ ພໍ່ຈະເອົາພອນປະການ [ກ]ທຳອິດຂອງ
ພໍ່ໄປ, ແທ້ຈິງແລ້ວ, ແມ່ນພອນປະການທຳ
ອິດຂອງພໍ່, ແລະ ມັນຈະຢູ່ກັບລາວ.
30 ແລະ ບັດນີ້, ໂຊຣຳ, ຂ້າພະເຈົ້າຢາກ
ເວົ້າກັບເຈົ້າວ່າ: ຈົ່ງເບິ່ງ, ເຈົ້າເປັນ [ກ]ຄົນໃຊ້
ຂອງລາບານ; ເຖິງຢ່າງໃດກໍຕາມ, ເຈົ້າຍັງ
ຖືກພາອອກມາຈາກແຜ່ນດິນເຢຣູຊາເລັມ,
ແລະ ຂ້າພະເຈົ້າຮູ້ວ່າເຈົ້າເປັນເພື່ອນທີ່
ແທ້ຈິງຂອງນີໄຟ, ລູກຂອງຂ້າພະເຈົ້າ
ຕະຫລອດໄປ.
31 ດັ່ງນັ້ນ, ເພາະວ່າເຈົ້າເປັນຄົນຊື່ສັດ
ຕະຫລອດມາ ລູກຫລານຂອງເຈົ້າຈະໄດ້
ຮັບພອນ [ກ]ພ້ອມກັບລູກຫລານຂອງລາວ
ພວກເຂົາຈະຢູ່ດ້ວຍຄວາມຮຸ່ງເຮືອງຍາວ
ນານໃນແຜ່ນດິນນີ້ ແລະ ບໍ່ມີສິ່ງໃດນອກ
ຈາກຈະເປັນຄວາມຊົ່ວຮ້າຍ ໃນບັນດາ
ພວກເຂົາທີ່ຈະເປັນອັນຕະລາຍ ຫລື ລົບ
ກວນຄວາມຮຸ່ງເຮືອງຂອງພວກເຂົາໃນ
ແຜ່ນດິນນີ້ຕະຫລອດໄປ.
32 ດັ່ງນັ້ນ, ຖ້າຫາກເຈົ້າຈະຮັກສາພຣະ
ບັນຍັດຂອງພຣະຜູ້ເປັນເຈົ້າ, ພຣະຜູ້ເປັນ
ເຈົ້າຈະຕັ້ງແຜ່ນດິນນີ້ໄວ້ ເພື່ອຄວາມໝັ້ນ
ຄົງຂອງລູກຫລານຂອງເຈົ້າກັບລູກຫລານ
ຂອງລູກຂ້າພະເຈົ້າ.

## ບົດທີ 2

*ການໄຖ່ມາເຖິງໂດຍຜ່ານທາງພຣະເມຊີອາຜູ້ບໍລິສຸດ—ອິດສະລະພາບໃນການເລືອກ (ອຳເພີໃຈ) ເປັນສິ່ງສຳຄັນຫລາຍທີ່ມີຢູ່ ແລະ ດຳເນີນຕໍ່ໄປ—ອາດາມຕົກເພື່ອມະນຸດຈະໄດ້ເປັນຢູ່—ມະນຸດມີສິດທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ. ປະມານ 588–570 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຢາໂຄບພໍ່ຂໍເວົ້າກັບລູກວ່າ:
ລູກເປັນ [ກ]ລູກຄົນທຳອິດຂອງພໍ່ໃນວັນແຫ່ງ
ຄວາມທຸກຂອງພໍ່ຢູ່ໃນຖິ່ນແຫ້ງແລ້ງກັນ
ດານ. ແລະ ຈົ່ງເບິ່ງ, ໃນໄວເດັກຂອງລູກ,
ລູກໄດ້ຮັບຄວາມທຸກຍາກລຳບາກ ແລະ
ຄວາມເສົ້າສະຫລົດໃຈມາຫລາຍ ເພາະ
ຄວາມຫຍາບຄາຍຂອງພວກອ້າຍຂອງລູກ.
2 ເຖິງຢ່າງໃດກໍຕາມຢາໂຄບລູກຄົນທຳ
ອິດຂອງພໍ່ໃນຖິ່ນແຫ້ງແລ້ງກັນດານ, ລູກ
ຍັງຮູ້ເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ;
ແລະ ພຣະອົງໄດ້ຕັ້ງຄວາມທຸກຂອງລູກໄວ້
ເພື່ອຜົນປະໂຫຍດຂອງລູກ.
3 ດັ່ງນັ້ນ, ຈິດວິນຍານຂອງລູກຈະໄດ້
ຮັບພອນ, ແລະ ລູກຈະຢູ່ຢ່າງປອດໄພກັບ
ນີໄຟອ້າຍຂອງລູກ, ແລະ ລູກຈະໃຊ້ວັນ
ເວລາຂອງລູກໄປໃນການຮັບໃຊ້ພຣະເຈົ້າ
ຂອງລູກ. ດັ່ງນັ້ນ, ພໍ່ຮູ້ວ່າ ລູກຖືກໄຖ່ແລ້ວ
ເພາະຄວາມຊອບທຳຂອງພຣະຜູ້ໄຖ່ຂອງ
ລູກ, ເພາະລູກເຫັນແລ້ວວ່າ ໃນຄວາມ
ສົມບູນແຫ່ງເວລາ ພຣະອົງຈະສະເດັດມາ
ເພື່ອນຳຄວາມລອດມາໃຫ້ມະນຸດ.
4 ແລະ ລູກໄດ້ [ກ]ເຫັນລັດສະໝີພາບຂອງ
ພຣະອົງແລ້ວໃນໄວເດັກຂອງລູກ; ດັ່ງນັ້ນ,
ລູກໄດ້ຮັບພອນຄືກັນກັບຄົນທີ່ພຣະອົງ
ຈະປະຕິບັດຕໍ່ໃນເນື້ອໜັງ; ເພາະພຣະວິນ
ຍານເປັນເໝືອນກັນ ເຊັ່ນ ມື້ວານນີ້, ມື້ນີ້
ແລະ ຕະຫລອດການ. ແລະ ເສັ້ນທາງຖືກ

28 *ກ* ຄມພ ສິດທິຂອງອ້າຍກົກ.
29 *ກ* ອຣຣ 1:3.
30 *ກ* 1 ນຟ 4:20, 35.
31 *ກ* 2 ນຟ 5:6.
**2** 1 *ກ* 1 ນຟ 18:7.
4 *ກ* 2 ນຟ 11:3; ຢຄ 7:5.

ຕຽມໄວ້ຕັ້ງແຕ່ການຕົກຂອງມະນຸດ, ແລະ
ຄວາມລອດເປັນຂອງໃຫ້ [ຂ]ລ້າໆ.
5 ແລະ ມະນຸດໄດ້ຮັບການແນະນຳຢ່າງ
ພຽງພໍຈົນ [ກ]ຮູ້ຈັກຄວາມດີຈາກຄວາມຊົ່ວ.
ແລະ ມີກົດໃຫ້ມະນຸດ ແລະ ໂດຍທາງກົດ
ບໍ່ມີເນື້ອໜັງອັນໃດທີ່ [ຂ]ຖືກຕ້ອງ; ຫລື ໂດຍ
ທາງກົດມະນຸດຍ່ອມຖືກຕັດ [ຄ]ອອກ. ແທ້
ຈິງແລ້ວ, ໂດຍກົດທາງຝ່າຍໂລກ ພວກ
ເຂົາໄດ້ຖືກຕັດອອກ ແລະ ໂດຍກົດທາງ
ຝ່າຍວິນຍານ ພວກເຂົາຈຶ່ງຕາຍຈາກສິ່ງທີ່
ດີ ແລະ ກາຍມາເປັນຄົນເສົ້າສະຫລົດໃຈ
ຕະຫລອດໄປ.
6 ດັ່ງນັ້ນ, [ກ]ການໄຖ່ຈຶ່ງມາເຖິງໂດຍຜ່ານ
ທາງ [ຂ]ພຣະເມຊີອາຜູ້ບໍລິສຸດ; ເພາະພຣະ
ອົງເຕັມໄປດ້ວຍ [ຄ]ພຣະຄຸນ ແລະ ຄວາມ
ຈິງ.
7 ຈົ່ງເບິ່ງ, ພຣະອົງໄດ້ຖວາຍພຣະອົງ
ເອງໃຫ້ເປັນ [ກ]ເຄື່ອງບູຊາເພື່ອບາບ, ເພື່ອ
ຕອບທີ່ສຸດຂອງກົດໃຫ້ຄົນທັງປວງຜູ້ມີໃຈ
ທີ່ຊອກຊ້ຳ ແລະ ມີວິນຍານທີ່ສຳນຶກຜິດ;
ແລະ ຈະຕອບ [ຂ]ທີ່ສຸດຂອງກົດໃຫ້ໃຜອີກບໍ່
ໄດ້.
8 ດັ່ງນັ້ນ, ມັນສຳຄັນພຽງໃດທີ່ຈະເຮັດ
ໃຫ້ສິ່ງເຫລົ່ານີ້ເປັນທີ່ຮູ້ຈັກແກ່ຜູ້ອາໄສຂອງ
ແຜ່ນດິນໂລກ ເພື່ອພວກເຂົາຈະໄດ້ຮູ້ວ່າ
ບໍ່ມີເນື້ອໜັງໃດຈະຢູ່ໃນທີ່ປະທັບຂອງພຣະ
ເຈົ້າໄດ້ [ກ]ນອກຈາກເປັນຜ່ານທາງພຣະຄຸນ
ຄວາມດີ, ແລະ ພຣະເມດຕາ, ແລະ ພຣະ
ຄຸນຂອງພຣະເມຊີອາຜູ້ບໍລິສຸດ ຜູ້ໄດ້ມອບ
ຊີວິດຂອງພຣະອົງຕາມທາງແຫ່ງເນື້ອໜັງ
ແລະ ຮັບເອົາມັນອີກ ໂດຍອຳນາດຂອງ
ພຣະວິນຍານ, ເພື່ອພຣະອົງຈະໄດ້ເຮັດ
ໃຫ້ເກີດ [ຂ]ການຟື້ນຄືນຊີວິດຂອງຄົນຕາຍ
ໂດຍເປັນຜູ້ທຳອິດທີ່ຈະລຸກຂຶ້ນມາ.
9 ດັ່ງນັ້ນ, ພຣະອົງຈຶ່ງເປັນຜົນທຳອິດໃຫ້
ແກ່ພຣະເຈົ້າ ເພາະພຣະອົງຈະ [ກ]ວິງວອນ
ແທນລູກຫລານມະນຸດທັງປວງ; ແລະ ຄົນ
ທີ່ເຊື່ອໃນພຣະອົງເທົ່ານັ້ນຈະລອດ.
10 ແລະ ເປັນເພາະການ [ກ]ວິງວອນແທນ
ທຸກໆຄົນ, ມະນຸດທັງປວງຍ່ອມມາຫາພຣະ
ເຈົ້າ; ດັ່ງນັ້ນ, ພວກເຂົາຢືນຢູ່ໃນທີ່ປະທັບ
ຂອງພຣະອົງ ເພື່ອຮັບ [ຂ]ການພິພາກສາ
ຂອງພຣະອົງຕາມຄວາມຈິງ ແລະ [ຄ]ຄວາມ
ບໍລິສຸດ ຊຶ່ງມີຢູ່ໃນພຣະອົງ. ດັ່ງນັ້ນ, ທີ່ສຸດ
ຂອງກົດ ຊຶ່ງພຣະຜູ້ບໍລິສຸດປະທານໄວ້ໃຫ້
ເພື່ອການລົງໂທດ ຊຶ່ງມີຕິດຢູ່ນັ້ນ, ຊຶ່ງໂທດ
ທີ່ມີຕິດຢູ່ນັ້ນ ເປັນສິ່ງກົງກັນຂ້າມກັບສິ່ງທີ່
ເປັນຄວາມສຸກ ຊຶ່ງມີຕິດຢູ່ເພື່ອຕອບທີ່ສຸດ
ຂອງ [ງ]ການຊົດໃຊ້—
11 ເພາະມັນຈຳເປັນວ່າ ຕ້ອງມີ [ກ]ການ

4 *ຂ* ຄມພ ພຣະຄຸນ.
5 *ກ* ມຣນ 7:16.
*ຂ* ຣມ 3:20; 2 ນຟ 25:23; ແອວ 42:12–16. ຄມພ ຮັບຮອງ, ການຮັບຮອງ.
*ຄ* 1 ນຟ 10:6; 2 ນຟ 9:6–38; ແອວ 11:40–45; 12:16, 24; 42:6–11; ຮລມ 14:15–18.
6 *ກ* 1 ນຟ 10:6; 2 ນຟ 25:20; ແອວ 12:22–25. ຄມພ ແຜນແຫ່ງການໄຖ່.
*ຂ* ຄມພ ພຣະເມຊີອາ.
*ຄ* ຢຮ 1:14, 17; ມຊ 1:6.
7 *ກ* ຄມພ ຊົດໃຊ້, ການຊົດໃຊ້.
*ຂ* ຣມ 10:4.
8 *ກ* 2 ນຟ 25:20; 31:21; ມຊຢ 4:8; 5:8; ແອວ 38:9.
*ຂ* 1 ກຣທ 15:20; ແອວ 7:12; 12:24–25; 42:23. ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
9 *ກ* ອຊຢ 53; ມຊຢ 14:12; 15:8–9.
10 *ກ* ຄມພ ພຣະຜູ້ໄຖ່.
*ຂ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຄ* ຄມພ ສັກສິດ, ຄວາມສັກສິດ.
*ງ* 2 ນຟ 9:7, 21–22, 26; ແອວ 22:14; 33:22; 34:9.
11 *ກ* ຄພ 29:39; 122:5–9. ຄມພ ຍາກລຳບາກ, ຄວາມຍາກລຳບາກ.

ກົງ ກັນ ຂ້າມ ໃນ ທຸກ ຢ່າງ. ລູກ ຄົນ ທຳ ອິດ
ຂອງພໍ່ທີ່ໄດ້ເກີດໃນຖິ່ນແຫ້ງແລ້ງກັນດານ
ເອີຍ, ຖ້າບໍ່ດັ່ງນັ້ນຈະ ເຮັດ ໃຫ້ ເກີດ ຄວາມ
ຊອບທຳບໍ່ ໄດ້, ບໍ່ ມີທັງຄວາມຊົ່ວຮ້າຍ, ບໍ່
ມີທັງຄວາມບໍລິສຸດ ຫລື ຄວາມທຸກທໍລະ
ມານ, ບໍ່ມີທັງ ຄວາມດີ ຫລື ຄວາມຊົ່ວ.
ດັ່ງນັ້ນ, ທຸກຢ່າງຈຶ່ງຈຳເປັນຈະຕ້ອງສານ
ປະກອບເຂົ້າກັນເປັນອັນດຽວ; ດັ່ງນັ້ນ ຖ້າ
ຫາກມັນເປັນອັນດຽວກັນ ມັນກໍຈະຕ້ອງຢູ່
ຄືກັນກັບຕາຍໂດຍບໍ່ມີຊີວິດ, ທັງບໍ່ມີຄວາມ
ຕາຍ ຫລື ຄວາມເນົ່າເປື່ອຍ ຫລື ຄວາມບໍ່
ເນົ່າເປື່ອຍ, ຄວາມສຸກ ຫລື ຄວາມທຸກທໍລະ
ມານ, ທັງຄວາມຮູ້ສຶກ ຫລື ຄວາມບໍ່ຮູ້ສຶກ.
12 ດັ່ງນັ້ນ, ມັນຈະຕ້ອງຖືກສ້າງຂຶ້ນສຳ
ລັບສິ່ງທີ່ບໍ່ມີຄຸນຄ່າ; ດັ່ງນັ້ນ ຈະບໍ່ມີ [ກ]ຈຸດ
ປະສົງໃນທີ່ສຸດຂອງການສ້າງມັນ. ດັ່ງນັ້ນ,
ສິ່ງ ນີ້ ຈຳ ຕ້ອງ ທຳລາຍຄວາມສະຫລຽວ
ສະຫລາດຂອງພຣະເຈົ້າ ແລະ ຈຸດປະສົງ
ອັນ ເປັນ ນິລັນ ດອນ ຂອງພຣະອົງ, ແລະ
ອຳນາດ, ແລະ ຄວາມ ເມດ ຕາ, ແລະ
[ຂ]ຄວາມຍຸດຕິທຳຂອງພຣະເຈົ້ານຳອີກ.
13 ແລະ ຖ້າຫາກຈະເວົ້າວ່າ [ກ]ບໍ່ມີກົດ,
ລູກຈະເວົ້າອີກວ່າບໍ່ມີບາບ. ຖ້າຫາກລູກ
ຈະເວົ້າວ່າບໍ່ມີບາບ ລູກຈະເວົ້າອີກວ່າບໍ່ມີ
ຄວາມຊອບທຳ. ແລະ ຖ້າຫາກບໍ່ມີຄວາມ
ຊອບທຳກໍບໍ່ມີຄວາມສຸກ. ແລະ ຖ້າຫາກບໍ່
ມີຄວາມຊອບທຳ ຫລື ຄວາມສຸກກໍບໍ່ມີໂທດ
ຫລື ຄວາມທຸກທໍລະມານ. ແລະ ຖ້າຫາກ
ບໍ່ມີສິ່ງເຫລົ່ານີ້ [ຂ]ກໍບໍ່ມີພຣະເຈົ້າ. ແລະ ຖ້າ
ຫາກບໍ່ມີພຣະເຈົ້າ, ພວກເຮົາກໍບໍ່ໄດ້ເປັນຢູ່,
ທັງໂລກກໍບໍ່ມີຢູ່; ເພາະຈະມີການສ້າງສິ່ງ
ຕ່າງໆບໍ່ໄດ້, ທັງຈະກະທຳ ຫລື ຈະຖືກກະ
ທຳບໍ່ໄດ້; ດັ່ງນັ້ນ, ທຸກຢ່າງຕ້ອງຫາຍໄປ.
14 ແລະ ບັດນີ້, ລູກຂອງພໍ່, ພໍ່ເວົ້າເລື່ອງ
ເຫລົ່ານີ້ກັບລູກເພື່ອຜົນປະໂຫຍດ ແລະ
ການຮຽນຮູ້ຂອງລູກ ເພາະວ່າມີພຣະເຈົ້າ
ແລະ ພຣະອົງໄດ້ [ກ]ສ້າງທຸກຢ່າງ, ທັງຟ້າ
ສະຫວັນ ແລະ ແຜ່ນດິນໂລກ, ແລະ ທຸກ
ຢ່າງທີ່ຢູ່ໃນນັ້ນ, ທັງສິ່ງທີ່ໄດ້ກະທຳ ແລະ
ສິ່ງທີ່ຈະຖືກ [ຂ]ກະທຳ.
15 ແລະ ເພື່ອນຳມາຊຶ່ງ [ກ]ຈຸດປະສົງອັນ
ເປັນນິລັນດອນຂອງພຣະອົງໃນທີ່ສຸດຂອງ
ມະນຸດ ຫລັງຈາກພຣະອົງໄດ້ສ້າງບິດາ
ມານດາຜູ້ທຳອິດຂອງພວກເຮົາ, ແລະ ສັດ
ໃນທົ່ງ ແລະ ນົກໃນອາກາດແລ້ວ, ແລະ
ໂດຍສະຫລຸບ, ທຸກຢ່າງທີ່ຖືກສ້າງຂຶ້ນ,
ຈຳເປັນຕ້ອງມີການກົງກັນຂ້າມ ເຖິງວ່າ
[ຂ]ໝາກໄມ້ [ຄ]ທີ່ຕ້ອງຫ້າມຍັງກົງກັນຂ້າມກັບ
[ງ]ຕົ້ນໄມ້ແຫ່ງຊີວິດ; ຢ່າງໜຶ່ງຫວານ ແລະ
ອີກຢ່າງໜຶ່ງຂົມ.
16 ດັ່ງ ນັ້ນ, ອົງ ພຣະ ຜູ້ ເປັນ ເຈົ້າ ຈຶ່ງ
ປະທານໃຫ້ມະນຸດ ເພື່ອພວກເຂົາຈະ [ກ]ກະ
ທຳດ້ວຍຕົວເອງ. ດັ່ງນັ້ນ, ມະນຸດກະທຳ
ດ້ວຍຕົວເອງບໍ່ໄດ້ ນອກຈາກຈະເປັນໄປ
ເພື່ອພວກເຂົາຖືກ [ຂ]ຊັກຈູງໂດຍຢ່າງໜຶ່ງ
ຫລື ອີກຢ່າງໜຶ່ງ.
17 ແລະ ພໍ່, ລີໄຮຕາມເລື່ອງທີ່ອ່ານມາ
ແລ້ວ ພໍ່ຈຳຕ້ອງຄິດວ່າ [ກ]ທູດຂອງພຣະເຈົ້າ

---

12 ກ ຄພ 88:25–26. ຄມພ ແຜ່ນດິນໂລກ—ໄດ້ຖືກສ້າງຂຶ້ນສຳລັບມະນຸດ.
ຂ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
13 ກ 2 ນຟ 9:25.
ຂ ແອວ 42:13.
14 ກ ຄມພ ສ້າງ, ການສ້າງ.
ຂ ຄພ 93:30.
15 ກ ອຊຢ 45:18; ແອວ 42:26; ມຊ 1:31, 39.
ຂ ປຖກ 3:6; ແອວ 12:21–23.
ຄ ປຖກ 2:16–17; ມຊ 3:17.
ງ ປຖກ 2:9; 1 ນຟ 15:22, 36; ແອວ 32:40.
16 ກ 2 ນຟ 10:23; ແອວ 12:31. ຄມພ ອຳເພີໃຈ.
ຂ ຄພ 29:39–40.
17 ກ ຄມພ ມານ.

ໄດ້ [ຂ]ຕົກຈາກສະຫວັນຕາມເລື່ອງທີ່ໄດ້ບັນ
ທຶກໄວ້; ດັ່ງນັ້ນ, ລາວຈຶ່ງກາຍເປັນມານ
ໂດຍສະແຫວງຫາແຕ່ສິ່ງທີ່ຊົ່ວຕໍ່ພຣະພັກ
ຂອງພຣະເຈົ້າ.
18 ແລະ ເນື່ອງ ຈາກ ລາວ ຕົກ ຈາກ
ສະຫວັນ ແລະ ເສົ້າສະຫລົດໃຈຕະຫລອດ
ໄປ, ລາວຈຶ່ງ [ກ]ສະແຫວງຫາຄວາມທຸກຍາກ
ໃຫ້ມະນຸດຊາດທັງປວງອີກ. ດັ່ງນັ້ນ, ລາວ
ໄດ້ກ່າວກັບ [ຂ]ເອວາ, ແທ້ຈິງແລ້ວ, ແມ່ນ
ງູເຫົ່າຕົວນັ້ນ, ຜູ້ເປັນມານ, ຊຶ່ງເປັນບິດາ
ຂອງ [ຄ]ຄວາມຂີ້ຕົວະທັງປວງ. ດັ່ງນັ້ນ, ມັນ
ໄດ້ກ່າວວ່າ: ຈົ່ງກິນໝາກໄມ້ທີ່ຕ້ອງຫ້າມ
ເສຍ, ແລ້ວເຈົ້າຈະບໍ່ຕາຍ, ແຕ່ເຈົ້າຈະເປັນ
ເໝືອນດັ່ງພຣະເຈົ້າ ຊຶ່ງ [ງ]ຮູ້ຄວາມດີ ແລະ
ຄວາມຊົ່ວ.
19 ແລະ ຫລັງຈາກອາດາມ ແລະ ເອວາ
[ກ]ຮັບສ່ວນໝາກໄມ້ທີ່ຕ້ອງຫ້າມແລ້ວ ເຂົາ
ທັງສອງຖືກໄລ່ອອກຈາກ [ຂ]ສວນເອເດນ
ໃຫ້ໄປໄຖດິນ.
20 ແລະ ເຂົາທັງສອງໄດ້ມີລູກຫລານ;
ແທ້ຈິງແລ້ວ, ແມ່ນ [ກ]ຄອບຄົວຂອງແຜ່ນດິນ
ໂລກທັງໝົດ.
21 ແລະ ວັນ ເວລາ ຂອງ ລູກ ຫລານ
[ກ]ມະນຸດໄດ້ຖືກຍືດ ຍາວອອກໄປ, ຕາມ
ພຣະປະສົງຂອງພຣະເຈົ້າ, ເພື່ອພວກເຂົາ
ຈະໄດ້ [ຂ]ກັບໃຈໃນເວລາທີ່ຢູ່ໃນເນື້ອໜັງ;
ດັ່ງນັ້ນ, ສະພາບຂອງພວກເຂົາກາຍເປັນ
ສະພາບຂອງ [ຄ]ການທົດລອງ, ແລະ ເວລາ
ຂອງພວກເຂົາຖືກເຮັດໃຫ້ດົນນານອອກ
ໄປຕາມພຣະບັນຍັດ, ຊຶ່ງອົງພຣະຜູ້ເປັນ
ເຈົ້າປະທານໃຫ້ລູກຫລານມະນຸດ. ເພາະ
ພຣະອົງປະທານພຣະບັນຍັດວ່າ ມະນຸດ
ທັງປວງຕ້ອງກັບໃຈ; ເພາະພຣະອົງໄດ້
ສະແດງຕໍ່ມະນຸດທັງປວງວ່າ ພວກເຂົາ
[ງ]ຫລົງລືມໄປ ເພາະການລ່ວງລະເມີດຂອງ
ບິດາມານດາຂອງພວກເຂົາ.
22 ແລະ ບັດນີ້, ຈົ່ງເບິ່ງຖ້າຫາກອາດາມ
ບໍ່ລ່ວງລະເມີດລາວກໍຈະບໍ່ຕົກ, ແຕ່ລາວ
ຈະຄົງຢູ່ໃນສວນເອເດນ. ແລະ ທຸກຢ່າງ
ທີ່ຖືກສ້າງຂຶ້ນກໍຕ້ອງຍັງຄົງຢູ່ໃນສະພາບ
ດຽວກັບທີ່ມັນເປັນຢູ່ຫລັງຈາກຖືກສ້າງຂຶ້ນ
ແລະ ມັນຕ້ອງຄົງຢູ່ຕະຫລອດໄປ ແລະ ບໍ່
ມີທີ່ສຸດ.
23 ແລະ ເຂົາທັງສອງຈະບໍ່ມີ [ກ]ລູກ; ດັ່ງ
ນັ້ນ, ພວກເຂົາຈະຄົງຢູ່ໃນສະພາບຂອງ
ຄວາມໄຮ້ດຽງສາ, ບໍ່ມີຄວາມສຸກ, ເພາະ
ພວກເຂົາບໍ່ຮູ້ຈັກຄວາມທຸກທໍລະມານ; ບໍ່
ເຮັດຄວາມດີ ເພາະພວກເຂົາບໍ່ຮູ້ຈັກບາບ.
24 ແຕ່ຈົ່ງເບິ່ງ, ທຸກຢ່າງເປັນໄປໂດຍ
ຄວາມສະຫລຽວສະຫລາດຂອງພຣະອົງຜູ້
[ກ]ຮູ້ຈັກທຸກເລື່ອງ.
25 [ກ]ອາດາມ [ຂ]ຕົກເພື່ອມະນຸດຈະໄດ້
[ຄ]ເປັນຢູ່; ແລະ ມະນຸດເປັນຢູ່ກໍເພື່ອພວກ
ເຂົາຈະໄດ້ມີ [ງ]ຄວາມສຸກ.

17 ຂ ອຊຢ 14:12; 2 ນຟ 9:8; ມຊ 4:3–4; ອຣຣ 3:27–28.
18 ກ 2 ນຟ 28:19–23; 3 ນຟ 18:18; ຄພ 10:22–27.
ຂ ຄມພ ເອວາ.
ຄ 2 ນຟ 28:8; ມຊ 4:4.
ງ ປຖກ 3:5; ແອວ 29:5; ມຣນ 7:15–19.
19 ກ ແອວ 12:31. ຄມພ ການຕົກຂອງ ອາດາມ ແລະ ເອວາ.
ຂ ຄມພ ເອເດນ.
20 ກ ຄພ 138:38–39.
21 ກ ແອວ 12:24; ມຊ 4:23–25.
ຂ ແອວ 34:32. ຄມພ ກັບໃຈ, ການກັບໃຈ.
ຄ ຄມພ ມະຕະ, ຄວາມ ເປັນມະຕະ.
ງ ຢຄ 7:12.
23 ກ ມຊ 5:11.
24 ກ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
25 ກ ຄມພ ອາດາມ.
ຂ ມຊ 6:48. ຄມພ ການຕົກຂອງ ອາດາມ ແລະ ເອວາ.
ຄ ຄມພ ມະຕະ, ຄວາມ ເປັນມະຕະ.
ງ ມຊ 5:10. ຄມພ ຊື່ນຊົມ, ຄວາມຊື່ນຊົມ; ມະນຸດ.

26 ແລະ [ກ]ພຣະເມຊີອາຈະສະເດັດມາ
ໃນຄວາມສົມບູນແຫ່ງເວລາ, ເພື່ອພຣະ
ອົງຈະໄດ້ [ຂ]ໄຖ່ລູກຫລານມະນຸດໃຫ້ລອດ
ຈາກການຕົກ. ແລະ ເພາະວ່າພວກເຂົາ
ຖືກໄຖ່ຈາກການຕົກ ພວກເຂົາຍ່ອມເປັນ
[ຄ]ອິດສະລະຕະຫລອດການຮູ້ຈັກຄວາມດີ
ຈາກຄວາມຊົ່ວທີ່ຈະກະທຳດ້ວຍຕົນເອງ
ແລະ ທີ່ຈະບໍ່ຖືກກະທຳນອກຈາກເປັນໄປ
ໂດຍໂທດຂອງ [ງ]ກົດໃນວັນຍິ່ງໃຫຍ່ ແລະ
ສຸດທ້າຍ ຕາມພຣະບັນຍັດ ຊຶ່ງພຣະເຈົ້າ
ປະທານໃຫ້.
27 ດັ່ງນັ້ນ, ມະນຸດເປັນ [ກ]ອິດສະລະຕາມ
ທາງຂອງເນື້ອໜັງ; ແລະ ໄດ້ຮັບທຸກຢ່າງ
ຊຶ່ງສົມຄວນກັບມະນຸດທີ່ພວກເຂົາຈະໄດ້
ຮັບ. ແລະ ພວກເຂົາເປັນອິດສະລະທີ່ຈະ
[ຂ]ເລືອກເສລີພາບ ແລະ [ຄ]ຊີວິດນິລັນດອນ,
ໂດຍທາງພຣະຜູ້ເປັນກາງທີ່ຍິ່ງໃຫຍ່ຂອງ
ມະນຸດທັງປວງ, ຫລື ຈະເລືອກການເປັນ
ຊະເລີຍ ແລະ ຄວາມຕາຍຕາມການເປັນ
ຊະເລີຍ ແລະ ອຳນາດຂອງມານ; ເພາະ
ມັນສະແຫວງຫາເພື່ອມະນຸດທັງປວງຈະ
ໄດ້ເສົ້າສະຫລົດໃຈຄືກັນກັບມັນ.
28 ແລະ ບັດນີ້, ລູກຂອງພໍ່, ພໍ່ຢາກໃຫ້
ລູກຫວັງເພິ່ງ [ກ]ພຣະຜູ້ເປັນກາງຜູ້ຍິ່ງໃຫຍ່
ອົງນີ້, ແລະ ໃຫ້ເຊື່ອຟັງພຣະບັນຍັດອັນຍິ່ງ
ໃຫຍ່ຂອງພຣະອົງ; ແລະ ຊື່ສັດຕໍ່ຄຳຂອງ
ພຣະອົງ, ແລະ ເລືອກຊີວິດນິລັນດອນຕາມ
ພຣະປະສົງຂອງພຣະວິນຍານສັກສິດຂອງ
ພຣະອົງ;
29 ແລະ ບໍ່ເລືອກຄວາມຕາຍນິລັນດອນ
ຕາມຄວາມປະສົງຂອງເນື້ອໜັງ ແລະ
ຄວາມຊົ່ວ ຊຶ່ງຢູ່ໃນນັ້ນ ຊຶ່ງໃຫ້ອຳນາດແກ່
ວິນຍານຂອງມານທີ່ຈະ [ກ]ຈັບກຸມ, ທີ່ຈະນຳ
ລູກລົງ [ຂ]ນະລົກ ເພື່ອມັນຈະໄດ້ປົກຄອງລູກ
ໃນອານາຈັກຂອງມັນ.
30 ພໍ່ເວົ້າສອງສາມຄຳນີ້ໄວ້ກັບລູກທຸກ
ຄົນ, ລູກຂອງພໍ່, ໃນຍຸກສຸດທ້າຍແຫ່ງການ
ທົດລອງຂອງພໍ່ ແລະ ພໍ່ເລືອກສ່ວນໃຫຍ່
ຕາມຖ້ອຍຄຳຂອງສາດສະດາ. ແລະ ພໍ່ບໍ່
ມີຈຸດປະສົງອື່ນໃດນອກຈາກວ່າ ຈະເປັນ
ຄວາມຜາສຸກອັນເປັນນິດຂອງຈິດວິນຍານ
ຂອງລູກ. ອາແມນ.

## ບົດທີ 3

*ໂຢເຊັບໃນເອຢິບເຫັນຊາວນີໄຟໃນພາບນິມິດ—ເພິ່ນໄດ້ທຳນາຍເຖິງ ໂຈເຊັບສະມິດ, ຜູ້ພະຍາກອນຍຸກສຸດທ້າຍ; ແລະ ເຖິງ ໂມເຊ ຜູ້ທີ່ໄດ້ນຳພາຊາວອິດສະຣາເອນອອກໄປ; ແລະ ເຖິງການອອກມາຂອງພຣະຄຳພີມໍມອນ. ປະມານ 588–570 ປີກ່ອນ ຄ.ສ.*

1 ແລະ ບັດນີ້ພໍ່ຂໍເວົ້າກັບລູກ, ໂຢເຊັບ
[ກ]ລູກຫລ້າຂອງພໍ່. ລູກໄດ້ເກີດໃນຖິ່ນແຫ້ງ
ແລ້ງກັນດານແຫ່ງຄວາມທຸກຂອງພໍ່; ແທ້
ຈິງແລ້ວ, ໃນວັນແຫ່ງຄວາມເສົ້າສະຫລົດ
ໃຈອັນໃຫຍ່ຫລວງທີ່ສຸດຂອງພໍ່ທີ່ແມ່ຂອງ
ລູກໄດ້ກຳເນີດລູກມາ.
2 ແລະ ຂໍພຣະຜູ້ເປັນເຈົ້າຈົ່ງຕັ້ງ [ກ]ແຜ່ນ
ດິນນີ້ ຊຶ່ງເປັນແຜ່ນດິນທີ່ມີຄຸນຄ່າທີ່ສຸດ
ໄວ້ໃຫ້ລູກ ເພື່ອເປັນມູນມໍລະດົກຂອງລູກ
ແລະ ເປັນມູນມໍລະດົກຂອງລູກຫລານຂອງ

26 *ກ* ຄມພ ພຣະເມຊີອາ.
*ຂ* ຄມພ ແຜນແຫ່ງການໄຖ່.
*ຄ* ແອວ 42:27; ຣອມ 14:30.
*ງ* ຄມພ ກົດ.
27 *ກ* ຄລຕ 5:1; ມຊ 6:56.
*ຂ* ຄມພ ອຳເພີໃຈ.
*ຄ* ຄມພ ຊີວິດນິລັນດອນ.
28 *ກ* ຄມພ ພຣະຜູ້ເປັນກາງ.
29 *ກ* ຣມ 6:16–18; ແອວ 12:11.
*ຂ* ຄມພ ນະລົກ.
**3** 1 *ກ* 1 ນຟ 18:7.
2 *ກ* 1 ນຟ 2:20. ຄມພ ແຜ່ນດິນແຫ່ງຄຳສັນຍາ.

ລູກ ກັບ ພວກ ອ້າຍ ຂອງ ລູກ, ເພື່ອ ຄວາມ ໝັ້ນ ຄົງ ຂອງ ລູກຕະຫລອດໄປ ຖ້າຫາກເປັນໄປວ່າລູກຈະຮັກສາພຣະບັນຍັດຂອງພຣະຜູ້ບໍລິສຸດຂອງອິດສະຣາເອນ.

3 ແລະ ບັດນີ້, ໂຢເຊັບລູກຜູ້ຫລ້າຂອງພໍ່, ຜູ້ທີ່ພໍ່ໄດ້ພາອອກມາຈາກຖິ່ນແຫ້ງແລ້ງກັນດານແຫ່ງຄວາມທຸກຂອງພໍ່, ຂໍໃຫ້ພຣະຜູ້ເປັນເຈົ້າຈົ່ງປະທານພອນໃຫ້ແກ່ລູກຕະຫລອດໄປເພື່ອລູກຫລານຂອງລູກຈະບໍ່ຖືກ [ກ]ທຳລາຍໃຫ້ໝົດສິ້ນໄປ.

4 ເພາະຈົ່ງເບິ່ງ, ລູກເປັນຜົນແອວຂອງພໍ່; ແລະ ພໍ່ເປັນຜູ້ສືບຕະກຸນຂອງ [ກ]ໂຢເຊັບຜູ້ຊຶ່ງຖືກພາໄປເປັນ [ຂ]ຊະເລີຍໃນເອຢິບ. ແລະ ພັນທະສັນຍາຂອງພຣະຜູ້ເປັນເຈົ້າຊຶ່ງກະທຳໄວ້ກັບໂຢເຊັບນັ້ນຍິ່ງໃຫຍ່.

5 ດັ່ງນັ້ນ, ໂຢເຊັບໄດ້ [ກ]ເຫັນວັນເວລາຂອງພວກເຮົາ. ແລະ ໂຢເຊັບໄດ້ຮັບສັນຍາກັບພຣະຜູ້ເປັນເຈົ້າວ່າ ຈາກຜົນແອວຂອງລາວ, ອົງພຣະຜູ້ເປັນເຈົ້າຈະຍົກ [ຂ]ກິ່ງງ່າ [ຄ]ອັນຊອບທຳຂຶ້ນເພື່ອເຊື້ອສາຍອິດສະຣາເອນ; ບໍ່ແມ່ນພຣະເມຊີອາ, ແຕ່ເປັນກິ່ງງ່າຊຶ່ງຈະຖືກຫັກອອກມາ, ເຖິງຢ່າງໃດກໍຕາມ, ມັນກໍຈະຖືກຈົດຈຳໄວ້ໃນພັນທະສັນຍາຂອງພຣະຜູ້ເປັນເຈົ້າ ເພື່ອ [ງ]ພຣະເມຊີອາຈະຖືກສະແດງໃຫ້ປະຈັກແກ່ພວກເຂົາໃນຍຸກສຸດທ້າຍ ດ້ວຍພຣະວິນຍານແຫ່ງອຳນາດຂອງການນຳພວກເຂົາອອກຈາກ [ຈ]ຄວາມມືດໄປຫາແສງສະຫວ່າງ—ແທ້ຈິງແລ້ວ, ອອກຈາກຄວາມມືດທີ່ປິດບັງແລະ ອອກຈາກຄວາມເປັນຊະເລີຍໄປຫາອິດສະລະພາບ.

6 ເພາະໂຢເຊັບໃຫ້ຖ້ອຍຄຳໄວ້ແທ້ໆ ຊຶ່ງມີຄວາມວ່າ: ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຂ້າພະເຈົ້າ ຈະຍົກ [ກ]ຜູ້ພະຍາກອນຜູ້ໜຶ່ງຂຶ້ນມາໃຫ້ແກ່ [ຂ]ຜົນແອວຂອງຂ້າພະເຈົ້າ, ຊຶ່ງຈະເປັນຜູ້ພະຍາກອນທີ່ປະເສີດ.

7 ແທ້ຈິງແລ້ວ, ໂຢເຊັບໄດ້ກ່າວໄວ້ວ່າ: ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າດັ່ງນີ້: ເຮົາຈະຍົກ [ກ]ຜູ້ພະຍາກອນທີ່ປະເສີດຜູ້ໜຶ່ງຂຶ້ນຈາກຜົນແອວຂອງເຈົ້າ. ແລະ ລາວຈະເປັນຜູ້ທີ່ໜ້ານັບຖືຢ່າງສູງໃນບັນດາຜົນແອວຂອງເຈົ້າ ແລະ ເຮົາຈະໃຫ້ບັນຍັດແກ່ລາວເພື່ອລາວຈະໄດ້ກະທຳວຽກງານສິ່ງໜຶ່ງເພື່ອຜົນແອວຂອງເຈົ້າ, ຜູ້ເປັນພີ່ນ້ອງຂອງລາວ ຊຶ່ງຈະມີຄ່າອັນຍິ່ງໃຫຍ່ກັບພວກເຂົາ, ເຖິງແມ່ນຕໍ່ການນຳພວກເຂົາມາຫາຄວາມຮູ້ຂອງພັນທະສັນຍາ ຊຶ່ງເຮົາໄດ້ເຮັດໄວ້ກັບບັນພະບຸລຸດຂອງເຈົ້າ.

8 ແລະ ເຮົາຈະໃຫ້ບັນຍັດແກ່ລາວຂໍ້ໜຶ່ງວ່າ ລາວຈະບໍ່ເຮັດງານ [ກ]ອື່ນ ນອກຈາກງານທີ່ເຮົາຈະສັ່ງລາວ. ແລະ ເຮົາຈະເຮັດໃຫ້ລາວຍິ່ງໃຫຍ່ໃນສາຍຕາຂອງເຮົາ; ເພາະລາວຈະເຮັດວຽກງານຂອງເຮົາ.

9 ແລະ ລາວຈະຍິ່ງໃຫຍ່ເໝືອນກັນກັບ [ກ]ໂມເຊຜູ້ຊຶ່ງເຮົາກ່າວໄວ້ວ່າຈະຍົກຂຶ້ນໃຫ້ເຈົ້າເພື່ອ [ຂ]ປົດປ່ອຍຜູ້ຄົນຂອງເຮົາ, ໂອ້ເຊື້ອສາຍອິດສະຣາເອນ.

3 ກ 2 ນຟ 9:53.
4 ກ ປຖກ 39:1–2; 45:4; 49:22–26; 1 ນຟ 5:14–16.
ຂ ປຖກ 37:29–36.
5 ກ ປຈສ ປຖກ 50:24–38 (ພາກທ້ອຍທ້າຍ); 2 ນຟ 4:1–2.
ຂ ປຖກ 49:22–26; 1 ນຟ 15:12; 19:24. ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
ຄ ຢາໂຄບ 2:25.
ງ 2 ນຟ 6:14; ຄພ 3:16–20.
ຈ ອຊຢ 42:16.
6 ກ 3 ນຟ 21:8–11; ມມ 8:16. ຄມພ ຜູ້ພະຍາກອນ.
ຂ ຄພ 132:30.
7 ກ ຄມພ ສະມິດ, ໂຈເຊັບ, ຜູ້ລູກ.
8 ກ ຄພ 24:7, 9.
9 ກ ມຊ 1:41.
ຂ ອພຍ 3:7–10; 1 ນຟ 17:24.

10 ແລະ ເຮົາ ຈະ ຍົກ ໂມເຊ ຂຶ້ນ ເພື່ອ ປົດ ປ່ອຍ ຜູ້ ຄົນ ຂອງ ເຈົ້າ ອ ອກ ຈາກ ແຜ່ນ ດິນ ເອຢິບ.

11 ແຕ່ ເຮົາ ຈະ ຍົກ ຜູ້ ພະ ຍາ ກອນ ຜູ້ ໜຶ່ງ ຂຶ້ນຈາກຜົນແອວຂອງເຈົ້າ; ແລະ ເຮົາຈະ ໃຫ້ [ກ]ອຳນາດແກ່ລາວ ເພື່ອ ຈະນຳຄຳເວົ້າ ຂອງເຮົາ ອອກ ມາ ຫາ ລູກຫລານ ຂອງຜົນ ແອວຂອງເຈົ້າ—ແລະ ບໍ່ພຽງແຕ່ເພື່ອການ ນຳຄຳເວົ້າຂອງເຮົາອອກມາເທົ່ານັ້ນ, ແຕ່ ຈະເຮັດໃຫ້ພວກເຂົາເນັ້ນໜັກໃນຄຳເວົ້າ ຂອງເຮົາ, ຊຶ່ງຈະອອກໄປໃນບັນດາພວກ ເຂົາແລ້ວ ພຣະເຈົ້າໄດ້ກ່າວໄວ້.

12 ດັ່ງນັ້ນ, ຜົນ ແອວ ຂອງເຈົ້າຈະ [ກ]ບັນ ທຶກ; ແລະ ຜົນແອວຂອງ [ຂ]ຢູດາຈະ [ຄ]ບັນ ທຶກ; ແລະ ເລື່ອງທີ່ຈະບັນທຶກໄວ້ໂດຍຜົນ ແອວຂອງເຈົ້າ, ແລະ ເລື່ອງທີ່ຈະບັນທຶກໄວ້ ຈາກຜົນແອວຂອງຢູດາຈະເຕີບໂຕພ້ອມ ກັນ, ຊຶ່ງນຳໄປຫາການເຮັດໃຫ້ຄຳສອນທີ່ ຜິດນັ້ນ [ງ]ຍອມຈຳນົນ ແລະ ກຳຈັດການຂັດ ແຍ້ງ, ແລະ ສະຖາປະນາສັນຕິສຸກຂຶ້ນໃນ ບັນດາຜົນແອວຂອງເຈົ້າ, ແລະ [ຈ]ນຳພວກ ເຂົາມາຫາ [ສ]ຄວາມຮູ້ເຖິງບັນພະບຸລຸດຂອງ ພວກເຂົາໃນຍຸກສຸດທ້າຍ, ແລະ ນຳມາຫາ ຄວາມຮູ້ຂອງພັນທະສັນຍາຂອງເຮົາ, ພຣະ ຜູ້ເປັນເຈົ້າໄດ້ກ່າວ.

13 ແລະ ໃນ ມື້ນັ້ນຄວາມອ່ອນແອຂອງ ພວກເຂົາຈະຖືກເຮັດໃຫ້ເຂັ້ມແຂງ ເພາະ ວຽກງານຂອງເຮົາຈະເລີ່ມຕົ້ນໃນບັນດາຜູ້ ຄົນທັງໝົດຂອງເຮົາ, ເພື່ອການນຳເຈົ້າກັບ ຄືນ, ໂອ້ ເຊື້ອສາຍອິດສະຣາເອນ, ພຣະຜູ້ ເປັນເຈົ້າໄດ້ກ່າວ.

14 ແລະ ໂຢເຊັບໄດ້ທຳນາຍໄວ້ ມີຄວາມ ວ່າ: ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າຈະປະທານ ພອນ ໃຫ້ຜູ້ພະ ຍາກອນຜູ້ນັ້ນ; ແລະ ຜູ້ທີ່ ພະຍາຍາມທຳລາຍເພິ່ນຈະຍອມຈຳນົນ; ເພາະຄຳສັນຍານີ້, ຊຶ່ງຂ້າພະເຈົ້າໄດ້ຮັບມາ ຈາກພຣະຜູ້ເປັນເຈົ້າກ່ຽວກັບຜົນແອວຂອງ ຂ້າພະເຈົ້າຈະສຳເລັດ. ຈົ່ງເບິ່ງ, ຂ້າພະເຈົ້າ ແນ່ໃຈໃນຄວາມສຳເລັດແຫ່ງຄຳສັນຍານີ້;

15 ແລະ ຊື່ຂອງເພິ່ນຈະຖືກເອີ້ນຕາມ [ກ]ຊື່ ຂອງຂ້າພະເຈົ້າ; ແລະ ເອີ້ນຕາມ [ຂ]ຊື່ຂອງ ພໍ່ຂອງເພິ່ນ ແລະ ເພິ່ນຈະເປັນເໝືອນດັ່ງ ຂ້າພະເຈົ້າ; ເພາະເລື່ອງທີ່ພຣະຜູ້ເປັນເຈົ້າ ຈະ ນຳ ອອກ ມາ ໂດຍ ມື ຂອງ ເພິ່ນ, ແລະ ອຳນາດຂອງພຣະຜູ້ເປັນເຈົ້າຈະນຳຜູ້ຄົນ ຂອງຂ້າພະເຈົ້າມາຫາຄວາມລອດ.

16 ແທ້ຈິງແລ້ວ, ໂຢເຊັບໄດ້ທຳນາຍໄວ້ ວ່າ: ຂ້າພະເຈົ້າແນ່ໃຈເຖິງເລື່ອງນີ້, ມັນ ເໝືອນດັ່ງທີ່ຂ້າພະເຈົ້າແນ່ໃຈໃນຄຳສັນຍາ ຂອງໂມເຊ; ເພາະພຣະຜູ້ເປັນເຈົ້າໄດ້ກ່າວ ກັບຂ້າພະເຈົ້າວ່າ, ເຮົາຈະ [ກ]ຮັກສາລູກ ຫລານຂອງເຈົ້າຕະຫລອດໄປ.

17 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ເຮົາຈະຍົກໂມເຊຂຶ້ນ; ແລະ ເຮົາຈະໃຫ້ ອຳນາດແກ່ລາວໃນໄມ້ຄ້ອນເທົ້າ, ແລະ ເຮົາຈະມອບການພິພາກສາໃຫ້ແກ່ລາວ ໃນການບັນທຶກ. ແຕ່ເຮົາຈະບໍ່ປ່ອຍລີ້ນ ຂອງລາວໃຫ້ເວົ້າຫລາຍ, ເພາະເຮົາຈະບໍ່ ເຮັດໃຫ້ລາວຍິ່ງໃຫຍ່ໃນການເວົ້າ, ແຕ່ເຮົາ ຈະ [ກ]ຂຽນກົດຂອງເຮົາໃຫ້ລາວດ້ວຍນິ້ວມື ຂອງເຮົາເອງ ແລະ ເຮົາຈະໃຫ້ມີຜູ້ [ຂ]ເວົ້າ ແທນລາວ.

11 *ກ* ຄພ 5:3–4.
12 *ກ* ຄມພ ພຣະຄຳພີມໍມອນ.
*ຂ* 1 ນຟ 13:23–29.
*ຄ* ຄມພ ພຣະຄຣິສ ຕະທຳຄຳພີ.
*ງ* ອຊກ 37:15–20; 1 ນຟ 13:38–41; 2 ນຟ 29:8; 33:10–11.
*ຈ* ມຣນ 1:4.
*ສ* 1 ນຟ 15:14; 2 ນຟ 30:5; ມມ 7:1, 5, 9–10.
15 *ກ* ຄພ 18:8.
*ຂ* ຈສ—ປ 1:3.
16 *ກ* ປຖກ 45:1–8.
17 *ກ* ພບຍ 10:2, 4; ມຊ 2:1.
*ຂ* ອພຍ 4:16.

18 ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າອີກວ່າ: ເຮົາຈະຍົກຂຶ້ນໄວ້ເພື່ອຜົນແອວຂອງເຈົ້າ, ແລະ ເຮົາຈະໃຫ້ມີຜູ້ເວົ້າແທນລາວ. ແລະ ເຮົາ, ຈົ່ງເບິ່ງ, ເຮົາຈະໃຫ້ແກ່ລາວເພື່ອລາວຈະໄດ້ຂຽນເລື່ອງທີ່ຜົນແອວຂອງເຈົ້າຂຽນເຖິງຜົນແອວຂອງເຈົ້າ; ແລະ ຜູ້ເວົ້າຂອງຜົນແອວຂອງເຈົ້າຈະປະກາດມັນ.

19 ແລະ ຄຳເວົ້າທີ່ລາວຈະຂຽນນັ້ນຈະເປັນຄຳເວົ້າທີ່ສະຫລຽວສະຫລາດຂອງເຮົາ ຊຶ່ງສົມຄວນທີ່ຈະອອກໄປສູ່ຜົນແອວຂອງເຈົ້າ. ແລະ ມັນຈະເປັນຄືກັນກັບວ່າ [ກ]ຜົນແອວຂອງເຈົ້າຮ້ອງບອກພວກເຂົາ [ຂ]ຈາກພື້ນດິນ ເພາະເຮົາຮູ້ຈັກສັດທາຂອງພວກເຂົາ.

20 ແລະ ພວກເຂົາຈະ [ກ]ຮ້ອງຈາກພື້ນດິນ, ແທ້ຈິງແລ້ວ, ເຖິງແມ່ນຈະຮ້ອງການກັບໃຈໃຫ້ພີ່ນ້ອງຂອງພວກເຂົາ, ເຖິງແມ່ນຫລັງຈາກຄົນຫລາຍລຸ້ນຜ່ານພວກເຂົາໄປ. ແລະ ເຫດການຈະບັງເກີດຂຶ້ນຄື ສຽງຮ້ອງຂອງພວກເຂົາຈະໄປເຖິງຕາມຄວາມງ່າຍດາຍຂອງຄຳເວົ້າຂອງພວກເຂົາ.

21 ເພາະສັດທາຂອງພວກເຂົາ [ກ]ຄຳເວົ້າຂອງພວກເຂົາຈະອອກຈາກປາກຂອງເຮົາໄປຫາພີ່ນ້ອງຂອງພວກເຂົາຜູ້ເປັນຜົນແອວຂອງເຈົ້າ, ແລະ ເຮົາຈະເຮັດໃຫ້ຄວາມອ່ອນແອຂອງຄຳເວົ້າຂອງພວກເຂົາເຂັ້ມແຂງດ້ວຍສັດທາຂອງພວກເຂົາ, ເພື່ອຈື່ຈຳພັນທະສັນຍາຂອງເຮົາ ຊຶ່ງເຮົາໄດ້ເຮັດໄວ້ກັບບັນພະບຸລຸດຂອງເຈົ້າ.

22 ແລະ ບັດນີ້, ຈົ່ງເບິ່ງໂຢເຊັບລູກຂອງພໍ່, ບັນພະບຸລຸດຂອງພໍ່ໃນອະດີດໄດ້ [ກ]ທຳນາຍໄວ້ຕາມນີ້.

23 ດັ່ງນັ້ນ, ເປັນຍ້ອນພັນທະສັນຍານີ້ ລູກຈຶ່ງໄດ້ຮັບພອນ; ເພາະລູກຫລານຂອງລູກຈະບໍ່ຖືກທຳລາຍ ເພາະພວກເຂົາຈະເຊື່ອຟັງຖ້ອຍຄຳຈາກໜັງສືນັ້ນ.

24 ແລະ ຈະມີຜູ້ຍິ່ງໃຫຍ່ຜູ້ໜຶ່ງໃນບັນດາພວກເຂົາ, ຜູ້ຈະສ້າງຄວາມດີຫລາຍຢ່າງທັງທາງຄຳເວົ້າ ແລະ ພາກປະຕິບັດ, ໂດຍເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າດ້ວຍສັດທາຢ່າງຫລວງຫລາຍໃນອັນທີ່ຈະເຮັດການແປກປະຫລາດອັນຍິ່ງໃຫຍ່ ແລະ ເຮັດສິ່ງນັ້ນ ຊຶ່ງໃຫຍ່ຫລວງໃນສາຍພຣະເນດຂອງພຣະເຈົ້າ ເພື່ອເຮັດໃຫ້ເກີດການຟື້ນຟູຢ່າງຫລວງຫລາຍກັບເຊື້ອສາຍອິດສະຣາເອນ ແລະ ກັບລູກຫລານຂອງພີ່ນ້ອງຂອງລູກ.

25 ແລະ ບັດນີ້, ລູກເປັນສຸກແລ້ວ ໂຢເຊັບ. ຈົ່ງເບິ່ງ, ລູກຍັງນ້ອຍຢູ່; ດັ່ງນັ້ນ ຈົ່ງເຊື່ອຟັງຄຳເວົ້າຂອງນີໄຟອ້າຍຂອງລູກ ແລະ ມັນຈະເປັນໄປກັບລູກເຖິງແມ່ນຕາມຖ້ອຍຄຳທີ່ພໍ່ເວົ້າໄວ້. ຈົ່ງຈື່ຈຳຄຳເວົ້າຂອງພໍ່ຜູ້ກຳລັງຈະຕາຍ. ອາແມນ.

## ບົດທີ 4

*ລີໄຮແນະນຳ ແລະ ໃຫ້ພອນແກ່ຜູ້ຄົນຂອງເພິ່ນ—ເພິ່ນໄດ້ເສຍຊີວິດໄປ ແລະ ໄດ້ຖືກຝັງໄວ້—ນີໄຟພາກພູມໃຈໃນພຣະກະລຸນາທິຄຸນຂອງພຣະເຈົ້າ—ນີໄຟມອບຄວາມໄວ້ວາງໃຈຂອງເພິ່ນໄວ້ກັບພຣະຜູ້ເປັນເຈົ້າຕະຫລອດໄປ. ປະມານ 588–570 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ຂ້າພະເຈົ້ານີໄຟ ຂໍເວົ້າກ່ຽວກັບຄຳທຳນາຍ ຊຶ່ງບິດາຂອງຂ້າພະ

19 *ກ* ຄພ 28:8.
*ຂ* ອຊຢ 29:4; 2 ນຟ 27:13; 33:13; ມມ 9:30; ມຣນ 10:27.
20 *ກ* 2 ນຟ 26:16; ມມ 8:23.
21 *ກ* 2 ນຟ 29:2.
22 *ກ* 2 ນຟ 3:5.

ເຈົ້າໄດ້ເວົ້າໄວ້ກ່ຽວກັບ [ກ]ໂຢເຊັບ ຜູ້ທີ່ຖືກພາໄປຫາເອຢິບ.

2 ເພາະ ຈົ່ງ ເບິ່ງ, ເພິ່ນ ໄດ້ ທຳ ນາຍ ໄວ້ກ່ຽວກັບລູກຫລານທັງໝົດຂອງເພິ່ນແທ້ໆ. ແລະ ມີ [ກ]ຄຳທຳນາຍຢູ່ບໍ່ຫລາຍທີ່ຍິ່ງໃຫຍ່ກວ່າຄຳທຳນາຍ ທີ່ ເພິ່ນໄດ້ບັນ ທຶກ ໄວ້. ແລະ ເພິ່ນໄດ້ທຳນາຍກ່ຽວກັບພວກເຮົາ, ແລະ ຄົນລຸ້ນຕໍ່ໆໄປຂອງພວກເຮົາ; ແລະ ຄຳທຳນາຍມີບັນທຶກໄວ້ໃນແຜ່ນຈາລຶກທອງເຫລືອງ.

3 ດັ່ງ ນັ້ນ, ຫລັງ ຈາກ ບິດາ ຂອງ ຂ້າ ພະ ເຈົ້າ ໄດ້ ເວົ້າເຖິງຄຳທຳນາຍຂອງໂຢເຊັບແລ້ວ, ເພິ່ນໄດ້ເອີ້ນລູກ ຂອງ ເລມັນ, ລູກຊາຍຂອງລາວ ແລະ ລູກສາວຂອງລາວ, ແລະ ໄດ້ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງ, ລູກຊາຍ ແລະ ລູກສາວຂອງພໍ່, ຜູ້ເປັນລູກຊາຍແລະ ລູກສາວຂອງ [ກ]ລູກຄົນທຳອິດຂອງພໍ່, ພໍ່ຢາກຈະໃຫ້ພວກເຈົ້າຕັ້ງໃຈຟັງຄຳເວົ້າຂອງພໍ່.

4 ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວໄວ້ວ່າ: [ກ]ຕາບໃດທີ່ເຈົ້າຈະຮັກສາບັນຍັດຂອງເຮົາ ເຈົ້າຈະຮຸ່ງເຮືອງຢູ່ໃນແຜ່ນດິນນັ້ນ; ແລະ ຕາບໃດທີ່ເຈົ້າຈະບໍ່ຮັກສາບັນຍັດຂອງເຮົາ ເຈົ້າຈະຖືກຕັດອອກຈາກທີ່ປະທັບຂອງເຮົາ.

5 ແຕ່ ຈົ່ງ ເບິ່ງ, ລູກ ຊາຍ ແລະ ລູກ ສາວຂອງພໍ່, ພໍ່ລົງໄປຫາຫລຸມສົບຂອງພໍ່ບໍ່ໄດ້ນອກຈາກພໍ່ຈະໃຫ້ [ກ]ພອນໄວ້ກັບລູກເສຍກ່ອນ; ເພາະຈົ່ງເບິ່ງ, ພໍ່ຮູ້ວ່າຖ້າຫາກລູກຖືກລ້ຽງດູໃນ [ຂ]ທາງທີ່ລູກຄວນດຳເນີນໄປລູກຈະບໍ່ອອກຈາກທາງນັ້ນ.

6 ດັ່ງນັ້ນ, ຖ້າຫາກລູກຖືກສາບແຊ່ງ, ຈົ່ງເບິ່ງ, ພໍ່ໃຫ້ພອນໄວ້ກັບລູກວ່າ ຄຳສາບແຊ່ງຈະໄດ້ຖືກເອົາໄປຈາກລູກ ແລະ ຕົກລົງເທິງ [ກ]ຫົວຂອງບິດາມານດາຂອງລູກ.

7 ດັ່ງນັ້ນ, ເພາະພອນຂອງພໍ່ ອົງພຣະຜູ້ເປັນເຈົ້າຈຶ່ງຈະ [ກ]ບໍ່ຍອມໃຫ້ລູກຕາຍ; ດັ່ງນັ້ນ, ພຣະອົງຈະ [ຂ]ເມດຕາລູກ ແລະ ລູກຫລານຂອງລູກຕະຫລອດໄປ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກບິດາຂອງຂ້າພະເຈົ້າໄດ້ເວົ້າກັບລູກຊາຍກັບລູກສາວຂອງເລມັນແລ້ວ, ເພິ່ນໃຫ້ນຳລູກຊາຍ ແລະ ລູກສາວຂອງເລມູເອນມາຢູ່ຕໍ່ໜ້າເພິ່ນ.

9 ແລະ ເພິ່ນໄດ້ເວົ້າກັບພວກເຂົາ ຊຶ່ງມີຄວາມວ່າ: ຈົ່ງເບິ່ງ, ລູກຊາຍ ແລະ ລູກສາວຂອງພໍ່ ຜູ້ເປັນລູກຊາຍ ແລະ ລູກສາວຂອງລູກຄົນທີສອງຂອງພໍ່; ຈົ່ງເບິ່ງ, ພໍ່ໃຫ້ພອນແກ່ລູກທີ່ເປັນພອນດຽວກັນກັບພອນ ທີ່ພໍ່ໃຫ້ໄວ້ກັບລູກຊາຍ ແລະ ລູກສາວຂອງເລມັນ; ດັ່ງນັ້ນ, ລູກຈະບໍ່ຖືກທຳລາຍໃຫ້ສູນສິ້ນ; ແຕ່ໃນທີ່ສຸດລູກຫລານຂອງລູກຈະໄດ້ຮັບພອນ.

10 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄືເມື່ອບິດາຂອງຂ້າພະເຈົ້າໄດ້ຈົບການເວົ້າກັບພວກເຂົາແລ້ວ, ຈົ່ງເບິ່ງ, ເພິ່ນໄດ້ເວົ້າກັບລູກຊາຍຂອງ [ກ]ອິດຊະມາເອນ, ແທ້ຈິງແລ້ວ, ແລະ ແມ່ນເວົ້າກັບຄອບຄົວຂອງລາວທຸກຄົນ.

11 ແລະ ຫລັງຈາກເພິ່ນໄດ້ເວົ້າກັບພວກເຂົາຈົບ ແລ້ວ, ເພິ່ນໄດ້ ເວົ້າກັບແຊມ, ມີຄວາມວ່າ: ລູກກັບລູກຫລານຂອງລູກເປັນ

---

**4** 1*ກ* ປຖກ 39:1–2.
2*ກ* 2 ນຟ 3:5.
3*ກ* ຄມພ ລູກກົກ.
4*ກ* 2 ນຟ 1:9.
5*ກ* ຄມພ ປິຕຸພອນ.
*ຂ* ສພສ 22:6.
6*ກ* ຄພ 68:25–29.
7*ກ* 2 ນຟ 30:3–6; ຄພ 3:17–18.
*ຂ* 1 ນຟ 13:31; 2 ນຟ 10:18–19; ຢຄ 3:5–9; ຣລມ 15:12–13.
10*ກ* 1 ນຟ 7:6.

ສຸກແລ້ວ; ເພາະລູກຈະໄດ້ຮັບແຜ່ນດິນທີ່
ເປັນມູນມໍລະດົກເຊັ່ນດຽວກັບນີໄຟ ນ້ອງ
ຊາຍຂອງລູກ. ແລະ ລູກຫລານຂອງລູກຈະ
ຖືກນັບເຂົ້າກັບລູກຫລານຂອງລາວ ແລະ
ລູກຈະເປັນຄືກັນກັບນ້ອງຊາຍຂອງລູກ;
ແລະ ລູກຫລານຂອງລູກຈະເປັນຄືກັນກັບ
ລູກຫລານຂອງລາວ; ແລະ ລູກຈະໄດ້ຮັບ
ພອນຕະຫລອດວັນເວລາຂອງລູກ.
12 ແລະ ເຫດການໄດ້ບັງເກີດຂຶ້ນ ຫລັງ
ຈາກລີໄຮ, ບິດາຂອງຂ້າພະເຈົ້າໄດ້ເວົ້າກັບ
ຄອບຄົວຂອງເພິ່ນໝົດແລ້ວທຸກຄົນ, ຕາມ
ຄວາມຮູ້ສຶກໃນໃຈຂອງເພິ່ນ, ແລະ ຕາມ
ພຣະວິນຍານຂອງພຣະຜູ້ເປັນເຈົ້າ ຊຶ່ງຢູ່
ກັບເພິ່ນແລ້ວ ເພິ່ນເລີ່ມເຖົ້າແກ່ລົງ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ສິ້ນຊີ
ວິດ ແລະ ໄດ້ຖືກຝັງໄວ້.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກການຕາຍຂອງເພິ່ນບໍ່ພໍເທົ່າໃດ
ມື້, ເລມັນກັບເລມູເອນ ແລະ ພວກລູກຊາຍ
ຂອງອິດຊະມາເອນໄດ້ໃຈຮ້າຍໃຫ້ຂ້າພະ
ເຈົ້າ ເພາະການຕັກເຕືອນຂອງພຣະຜູ້ເປັນ
ເຈົ້າ.
14 ເພາະຂ້າພະເຈົ້ານີໄຟຖືກບັງຄັບໃຫ້
ເວົ້າກັບພວກເຂົາຕາມພຣະຄຳຂອງພຣະ
ອົງ; ເພາະຂ້າພະເຈົ້າໄດ້ເວົ້າຫລາຍເລື່ອງ
ກັບພວກເຂົາ, ແລະ ບິດາຂອງຂ້າພະເຈົ້າ
ກໍໄດ້ເວົ້າຄືກັນກ່ອນການຕາຍຂອງເພິ່ນຕັ້ງ
ຫລາຍຂໍ້ ຊຶ່ງໄດ້ບັນທຶກໄວ້ໃນ *ກ*ແຜ່ນຈາລຶກ
ອີກຊຸດໜຶ່ງຂອງຂ້າພະເຈົ້າ; ເພາະປະຫວັດ
ສ່ວນໃຫຍ່ມີຂຽນໄວ້ຢູ່ໃນ ແຜ່ນຈາລຶກອີກ
ຊຸດໜຶ່ງຂອງຂ້າພະເຈົ້າ.
15 ແລະ ໃນແຜ່ນຈາລຶກ *ກ*ເຫລົ່ານີ້ ຂ້າ
ພະເຈົ້າໄດ້ບັນທຶກເລື່ອງຂອງຈິດວິນຍານ
ຂອງຂ້າພະເຈົ້າ ແລະ ຂໍ້ຄວາມພຣະຄຳພີ
ຫລາຍຂໍ້ ຊຶ່ງໄດ້ຈາລຶກຢູ່ໃນແຜ່ນຈາລຶກ
ທອງເຫລືອງ ເພາະຈິດວິນຍານຂອງຂ້າ
ພະເຈົ້າເບີກບານໃນພຣະຄຳພີ ແລະ ໃຈ
ຂອງຂ້າພະເຈົ້າ *ຂ*ຄຳນຶງເຖິງຂໍ້ຄວາມເຫລົ່າ
ນັ້ນ ແລະ ໄດ້ບັນທຶກມັນໄວ້ເພື່ອ *ຄ*ການ
ຮຽນຮູ້ ແລະ ເພື່ອຜົນປະໂຫຍດຂອງລູກ
ຫລານຂອງຂ້າພະເຈົ້າ.
16 ຈົ່ງເບິ່ງ, *ກ*ຈິດວິນຍານຂອງຂ້າພະ
ເຈົ້າເບີກບານໃນເລື່ອງຂອງພຣະຜູ້ເປັນ
ເຈົ້າ; ແລະ *ຂ*ໃຈຂອງຂ້າພະເຈົ້າຄິດຄຳນຶງ
ຢູ່ຕະຫລອດເວລາເຖິງເລື່ອງທີ່ຂ້າພະເຈົ້າ
ໄດ້ເຫັນ ແລະ ໄດ້ຍິນມາ.
17 ເຖິງຢ່າງໃດກໍຕາມ, ທັງທີ່ມີພຣະ
ມະຫາ *ກ*ກະລຸນາທິຄຸນຂອງພຣະຜູ້ເປັນ
ເຈົ້າໃນການສະແດງວຽກງານອັນຍິ່ງໃຫຍ່
ແລະ ໜ້າອັດສະຈັນຂອງພຣະອົງກັບຂ້າ
ພະເຈົ້າ, ໃຈຂອງຂ້າພະເຈົ້າຍັງຮ້ອງວ່າ:
ໂອ້ *ຂ*ຄົນຕ່ຳຕ້ອຍຢ່າງຂ້າພະເຈົ້າ! ແທ້ຈິງ
ແລ້ວ, ໃຈຂອງຂ້າພະເຈົ້າເສົ້າສະຫລົດ
ເພາະເນື້ອໜັງຂອງຂ້າພະເຈົ້າ; ຈິດວິນ
ຍານຂອງຂ້າພະເຈົ້າໂສກເສົ້າເພາະຄວາມ
ຊົ່ວຮ້າຍຂອງຂ້າພະເຈົ້າ.
18 ຂ້າພະເຈົ້າຖືກຫຸ້ມລ້ອມໄປດ້ວຍສິ່ງລໍ້
ລວງ ແລະ ບາບຊຶ່ງໄດ້ *ກ*ກີດກັນຂ້າພະເຈົ້າ
ໄວ້ຢ່າງງ່າຍດາຍ.
19 ແລະ ເມື່ອຂ້າພະເຈົ້າປາດຖະໜາຈະ
ປິຕິຍິນດີ, ໃຈຂອງຂ້າພະເຈົ້າຮ້ອງຄວນ
ຄາງເພາະບາບຂອງຂ້າພະເຈົ້າ, ເຖິງຢ່າງ

14 *ກ* 1 ນຟ 1:16–17; 9:4.
15 *ກ* 1 ນຟ 6:4–6.
*ຂ* ຄມພ ໄຕ່ຕອງ; ພຣະຄຳພີ.
*ຄ* 1 ນຟ 19:23.
16 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
*ຂ* ຄມພ ໃຈ.
17 *ກ* 2 ນຟ 9:10; ຄພ 86:11.
*ຂ* ຣມ 7:24.
18 *ກ* ຣມ 7:21–23; ຮຣ 12:1; ແອວ 7:15.

ໃດກໍຕາມ, ຂ້າພະເຈົ້າຍັງຮູ້ວ່າ, ຂ້າພະເຈົ້າ
ໄວ້ວາງໃຈຜູ້ໃດມາ.
20 ພຣະເຈົ້າຂອງຂ້າພະເຈົ້າເປັນຜູ້ສະ
ໜັບສະໜູນຂອງຂ້າພະເຈົ້າ; ພຣະອົງນຳ
ຂ້າພະເຈົ້າຜ່ານຄວາມທຸກຂອງຂ້າພະເຈົ້າ
ໃນຖິ່ນແຫ້ງແລ້ງກັນດານ; ແລະ ພຣະອົງ
ໄດ້ປົກປ້ອງຂ້າພະເຈົ້າເທິງນ້ຳທີ່ມີຄວາມ
ເລິກທີ່ສຸດ.
21 ພຣະອົງໄດ້ເຮັດໃຫ້ຂ້າພະເຈົ້າເຕັມ
ໄປດ້ວຍ [ກ]ຄວາມຮັກຂອງພຣະອົງ, ຈົນວ່າ
ເນື້ອໜັງຂອງຂ້າພະເຈົ້າຮ້ອນຮົນ.
22 ພຣະອົງໄດ້ເຮັດໃຫ້ [ກ]ສັດຕູຂອງຂ້າ
ພະເຈົ້າຍອມຈຳນົນ, ຊຶ່ງເປັນເຫດໃຫ້ພວກ
ເຂົາສັ່ນສາຍຕໍ່ໜ້າຂອງຂ້າພະເຈົ້າ.
23 ຈົ່ງເບິ່ງ, ພຣະອົງໄດ້ຍິນສຽງຮ້ອງ
ຂອງຂ້າພະເຈົ້າໃນຕອນກາງເວັນ, ແລະ
ພຣະອົງໄດ້ປະທານຄວາມຮູ້ໃຫ້ແກ່ຂ້າພະ
ເຈົ້າໂດຍ [ກ]ພາບນິມິດໃນຕອນກາງຄືນ.
24 ແລະ ໃນຕອນກາງເວັນ ຂ້າພະເຈົ້າ
ເພີ່ມທະວີຄວາມແນ່ວແນ່ໃນ [ກ]ການອະທິ
ຖານທີ່ມີພະລັງຕໍ່ພຣະອົງ; ແທ້ຈິງແລ້ວ,
ຂ້າພະເຈົ້າໄດ້ສົ່ງສຽງຂອງຂ້າພະເຈົ້າຂຶ້ນ
ຫາເບື້ອງເທິງ ແລະ ເຫລົ່າທູດໄດ້ລົງມາປະ
ຕິບັດຕໍ່ຂ້າພະເຈົ້າ.
25 ແລະ ຮ່າງກາຍຂອງຂ້າພະເຈົ້າໄດ້
ຖືກ [ກ]ນຳໄປດ້ວຍປີກແຫ່ງພຣະວິນຍານ
ຂອງພຣະອົງ ໄປເທິງພູເຂົາອັນສູງທີ່ສຸດ.
ແລະ ດວງຕາຂອງຂ້າພະເຈົ້າໄດ້ເຫັນສິ່ງ
ທີ່ຍິ່ງໃຫຍ່, ແທ້ຈິງແລ້ວ, ແມ່ນສິ່ງຍິ່ງໃຫຍ່
ເກີນໄປສຳລັບມະນຸດ; ສະນັ້ນ, ຂ້າພະເຈົ້າ
ໄດ້ຖືກຫ້າມບໍ່ໃຫ້ບັນທຶກເລື່ອງເຫລົ່ານັ້ນ.
26 ໂອ້ ແລ້ວຖ້າຫາກຂ້າພະເຈົ້າບໍ່ເຫັນ
ສິ່ງທີ່ຍິ່ງໃຫຍ່ເຊັ່ນນັ້ນ, ຖ້າຫາກພຣະຜູ້
ເປັນເຈົ້າໄດ້ຖ່ອມຕົວຂອງພຣະອົງລົງໃຫ້
ລູກຫລານມະນຸດຈົນສະເດັດມາຢ້ຽມຢາມ
ມະນຸດດ້ວຍພຣະເມດຕາຢ່າງລົ້ນເຫລືອ,
[ກ]ເປັນຫຍັງໃຈຂອງຂ້າພະເຈົ້າຈຶ່ງຮ້ອງໄຫ້
ແລະ ຈິດວິນຍານຂອງຂ້າພະເຈົ້າຍັງຄ້າງ
ຄາຢູ່ໃນຮ່ອມພູແຫ່ງຄວາມເສົ້າສະຫລົດ
ໃຈ, ແລະ ເນື້ອໜັງຂອງຂ້າພະເຈົ້າສູນເສຍ
ໄປ, ແລະ ກຳລັງຂອງຂ້າພະເຈົ້າລົດລົງ,
ເປັນຍ້ອນຄວາມທຸກຂອງຂ້າພະເຈົ້າບໍ?
27 ແລະ ເປັນຫຍັງຂ້າພະເຈົ້າຈຶ່ງ [ກ]ຜ່າຍ
ແພ້ຕໍ່ບາບ, ເປັນຍ້ອນເນື້ອໜັງຂອງຂ້າພະ
ເຈົ້າບໍ? ແທ້ຈິງແລ້ວ, ເປັນຫຍັງຂ້າພະເຈົ້າ
ຈຶ່ງເປີດທາງໃຫ້ [ຂ]ສິ່ງລໍ້ລວງຈົນວ່າມານ
ຮ້າຍມາຢູ່ໃນໃຈຂອງຂ້າພະເຈົ້າ ເພື່ອທຳ
ລາຍ [ຄ]ສັນຕິສຸກຂອງຂ້າພະເຈົ້າ ແລະ ເຮັດ
ໃຫ້ຈິດວິນຍານຂອງຂ້າພະເຈົ້າເປັນທຸກ?
ເປັນຫຍັງຂ້າພະເຈົ້າຈຶ່ງໃຈຮ້າຍ? ເປັນ
ຍ້ອນສັດຕູຂອງຂ້າພະເຈົ້າບໍ?
28 ຕື່ນເຖີດ, ຈິດວິນຍານຂອງຂ້າພະ
ເຈົ້າເອີຍ! ຢ່າຈົມຢູ່ໃນບາບອີກຕໍ່ໄປເລີຍ.
ຈົ່ງປິຕິຍິນດີເຖີດ, ໂອ້ ໃຈຂອງຂ້າພະເຈົ້າ
ເອີຍ, ແລະ ຢ່າໃຫ້ມີບ່ອນວ່າງເປົ່າແກ່ [ກ]ສັດ
ຕູຂອງຈິດວິນຍານຂອງຂ້າພະເຈົ້າຕໍ່ໄປ
ເລີຍ.
29 ຢ່າໃຈຮ້າຍເພາະສັດຕູຂອງຂ້າພະ
ເຈົ້າອີກເລີຍ ຢ່າຖອຍກຳລັງຂອງຂ້າພະ
ເຈົ້າລົງໄປເພາະຄວາມທຸກຂອງຂ້າພະເຈົ້າ
ເລີຍ.
30 ຈົ່ງປິຕິຍິນດີເຖີດ, ໂອ້ ໃຈຂອງຂ້າພະ

21 *ກ* ຄມພ ຮັກ, ຄວາມຮັກ.
22 *ກ* 1 ນຟ 17:52.
23 *ກ* ຄມພ ພາບນິມິດ.
24 *ກ* ຢກບ 5:16;
1 ນຟ 2:16.
25 *ກ* 1 ນຟ 11:1;
ມຊ 1:1–2.
26 *ກ* ພສສ 43:5.
27 *ກ* ຣມ 6:13.
*ຂ* ຄມພ ລໍ້ລວງ, ການລໍ້ລວງ.
*ຄ* ຄມພ ສະຫງົບ,
ຄວາມສະຫງົບ.
28 *ກ* ຄມພ ມານ.

ເຈົ້າເອີຍ, ຈົ່ງຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ,
ແລະ ທູນວ່າ: ໂອ້ ພຣະ ອົງ ເຈົ້າເອີຍ, ຂ້າ
ນ້ອຍ ຈະ ສັນ ລະ ເສີນ ພ ຣະ ອົງ ຕະ ຫລອດ
ໄປ; ແທ້ຈິງແລ້ວ, ຈິດ ວິນ ຍານຂອງຂ້າ
ນ້ອຍຈະປິຕິຍິນດີໃນພຣະອົງ, ພຣະເຈົ້າ
ຂອງຂ້ານ້ອຍ, ແລະ [ກ]ສີລາແຫ່ງຄວາມ
ລອດຂອງຂ້ານ້ອຍ.
31 ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງຈະໄຖ່
ຈິດວິນຍານຂອງຂ້ານ້ອຍບໍ? ພຣະອົງຈະ
ປົດປ່ອຍຂ້ານ້ອຍໃຫ້ພົ້ນຈາກກຳມືຂອງ
ພວກສັດຕູຂອງຂ້ານ້ອຍບໍ? ພຣະອົງຈະ
ເຮັດໃຫ້ຕົວຂ້ານ້ອຍສັ່ນຕໍ່ສິ່ງທີ່ຫລຽວເຫັນ
ເປັນ [ກ]ບາບບໍ?
32 ຂໍໃຫ້ປະຕູນະລົກຈົ່ງປິດສະເໝີຕໍ່ໜ້າ
ຂ້ານ້ອຍເຖີດ, ເພາະ [ກ]ໃຈຂອງຂ້ານ້ອຍ
ຊອກຊ້ຳ ແລະ ວິນຍານຂອງຂ້ານ້ອຍສຳ
ນຶກຜິດແລ້ວ! ໂອ້ ພຣະຜູ້ເປັນເຈົ້າ, ພຣະ
ອົງຢ່າປິດປະຕູຄວາມຊອບທຳຂອງພຣະ
ອົງຕໍ່ໜ້າຂ້ານ້ອຍເລີຍ, ເພື່ອຂ້ານ້ອຍຈະ
ໄດ້ [ຂ]ໄຕ່ໃນທາງຂອງຮ່ອມພູທີ່ຕ່ຳ, ເພື່ອ
ຂ້ານ້ອຍຈະໄດ້ເຄັ່ງຄັດຢູ່ໃນຖະໜົນທີ່ຮາບ
ພຽງ!
33 ໂອ້ ພຣະຜູ້ເປັນເຈົ້າ, ຂໍ ພຣະ ອົງ ຈົ່ງ
ໂອບ ອ້ອມ ຂ້າ ນ້ອຍ ໃຫ້ ຮອບ ໃນ ເສື້ອ ຄຸມ
ແຫ່ງ ຄວາມ ຊອບ ທຳ ຂອງ ພຣະ ອົງ! ໂອ້
ພຣະຜູ້ເປັນເຈົ້າ, ຂໍພຣະອົງຈົ່ງເຮັດທາງ
ເພື່ອການຫລົບໜີຂອງຂ້ານ້ອຍຕໍ່ໜ້າສັດຕູ
ຂອງຂ້ານ້ອຍດ້ວຍເທີ້ນ! ຂໍພຣະອົງຈົ່ງເຮັດ
ທາງໃຫ້ຊື່ໄປຕໍ່ໜ້າຂ້ານ້ອຍ! ຂໍພຣະອົງຢ່າ
ວາງສິ່ງທີ່ເຮັດໃຫ້ມີສະດຸດໃນທາງຂອງຂ້າ
ນ້ອຍ—ແຕ່ຂໍໃຫ້ພຣະອົງຈົ່ງຖາງທາງຂອງ
ຂ້ານ້ອຍຕໍ່ໜ້າຂ້ານ້ອຍ, ແລະ ຂໍຢ່າລ້ອມ
ຮົ້ວຕັນທາງຂ້ານ້ອຍ, ແຕ່ໃຫ້ຕັນທາງສັດຕູ
ຂອງຂ້ານ້ອຍດ້ວຍເທີ້ນ.
34 ໂອ້ ພຣະຜູ້ເປັນເຈົ້າ, ຂ້ານ້ອຍ [ກ]ໄວ້
ວາງໃຈໃນພຣະອົງ, ແລະ ຂ້ານ້ອຍຈະ [ຂ]ໄວ້
ວາງໃຈໃນພຣະອົງຕະຫລອດໄປ. ຂ້ານ້ອຍ
ຈະບໍ່ວາງຄວາມ [ຄ]ໄວ້ວາງໃຈໃນແຂນແຫ່ງ
ເນື້ອໜັງ; ເພາະຂ້ານ້ອຍຮູ້ວ່າຄົນທີ່ວາງ
ຄວາມໄວ້ວາງໃຈຂອງເຂົາໃນແຂນແຫ່ງ
ເນື້ອໜັງຈະຖືກສາບແຊ່ງ. ແທ້ຈິງແລ້ວ,
ຄົນທີ່ວາງຄວາມໄວ້ວາງໃຈຂອງເຂົາໃນ
ມະນຸດ ຫລື ເຮັດໃຫ້ເນື້ອໜັງເປັນແຂນຂອງ
ເຂົາ ຈະຖືກສາບແຊ່ງ.
35 ແທ້ຈິງແລ້ວ, ຂ້ານ້ອຍຮູ້ວ່າ ພຣະເຈົ້າ
ຈະປະທານໃຫ້ [ກ]ດ້ວຍໃຈກະລຸນາແກ່ຄົນ
ທີ່ຂໍ. ແທ້ຈິງແລ້ວ, ພຣະເຈົ້າຂອງຂ້ານ້ອຍ
ຈະປະທານໃຫ້ຂ້ານ້ອຍຖ້າຫາກຂ້ານ້ອຍ
[ຂ]ຂໍ [ຄ]ບໍ່ຜິດທາງ; ສະນັ້ນ ຂ້ານ້ອຍຈະກາບ
ທູນໃຫ້ສຽງຂອງຂ້ານ້ອຍເຖິງພຣະອົງ; ແທ້
ຈິງແລ້ວ, ຂ້ານ້ອຍຈະຮ້ອງທູນຕໍ່ພຣະອົງ,
ພຣະເຈົ້າຂອງຂ້ານ້ອຍ, [ງ]ສີລາແຫ່ງຄວາມ
ຊອບທຳຂອງຂ້ານ້ອຍ. ຈົ່ງເບິ່ງ, ສຽງຂອງ
ຂ້ານ້ອຍຈະຂຶ້ນໄປເຖິງພຣະອົງ, ພຣະຜູ້
ເປັນສີລາຂອງຂ້ານ້ອຍ ແລະ ພຣະເຈົ້າ
ຜູ້ເປັນນິດຂອງຂ້ານ້ອຍຕະຫລອດ. ອາ
ແມນ.

## ບົດທີ 5

*ຊາວນີໄຟແຍກຕົວຂອງພວກເຂົາອອກ ຈາກຊາວເລມັນ, ພວກເຂົາຮັກສາກົດ*

30 ກ 1 ກຣທ 3:11.
ຄມພ ຫີນ.
31 ກ ຣມ 12:9;
ແອວ 13:12.
32 ກ ຄມພ ຫົວໃຈທີ່ຊອກຊ້ຳ.
ຂ ຄມພ ເດີນ, ເດີນໄປ
ກັບພຣະເຈົ້າ.
34 ກ ຄມພ ໄວ້ວາງໃຈ,
ຄວາມໄວ້ວາງໃຈ.
ຂ ພສສ 44:6–8.
ຄ ຢມຢ 17:5;
ມມ 3:9; 4:8.
35 ກ ຢກບ 1:5.
ຂ ຄມພ ອະທິຖານ, ການອະ
ທິຖານ, ຄຳອະທິຖານ.
ຄ ຮລມ 10:5.
ງ ພບຍ 32:4.

*ຂອງໂມເຊ ແລະ ສ້າງພຣະວິຫານ—ຍ້ອນ ຄວາມບໍ່ເຊື່ອຖືຂອງພວກເຂົາ, ຊາວເລມັນ ຈຶ່ງຖືກຕັດອອກຈາກທີ່ປະທັບຂອງພຣະຜູ້ ເປັນເຈົ້າ, ແລະ ຖືກສາບແຊ່ງ, ແລະ ກາຍ ເປັນໄພພິບັດຕໍ່ຊາວນີໄຟ. ປະມານ 588–559 ປີ ກ່ອນ ຄ.ສ.*

1 ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ຮ້ອງທູນພຣະຜູ້ເປັນເຈົ້າ
ອີງເປັນພຣະເຈົ້າຂອງຂ້າພະເຈົ້າຫລາຍ
ຢ່າງ ເພາະ ᵃຄວາມຮ້າຍກາດຂອງພວກ
ອ້າຍຂອງຂ້າພະເຈົ້າ.
2 ແຕ່ ຈົ່ງ ເບິ່ງ, ຄວາມ ຮ້າຍ ກາດ ຂອງ
ພວກເຂົາທີ່ມີຕໍ່ຂ້າພະເຈົ້າໄດ້ເພີ່ມທະວີ
ຂຶ້ນ, ເຖິງຂະໜາດທີ່ພວກເຂົາໄດ້ພະຍາ
ຍາມຈະເອົາຊີວິດຂອງຂ້າພະເຈົ້າ.
3 ແທ້ຈິງແລ້ວ, ພວກເຂົາໄດ້ຈົ່ມໃຫ້ຂ້າ
ພະເຈົ້າ ມີຄວາມວ່າ: ນ້ອງຊາຍຂອງພວກ
ເຮົາຄິດຢາກ ᵃປົກຄອງພວກເຮົາ; ແລະ
ພວກເຮົາມີຄວາມລຳບາກມາຫລາຍເພາະ
ລາວ; ດັ່ງນັ້ນ, ບັດນີ້ໃຫ້ພວກເຮົາຂ້າລາວ
ຖິ້ມເສຍ, ເພື່ອວ່າພວກເຮົາຈະບໍ່ໄດ້ເປັນ
ທຸກເພາະຄຳເວົ້າຂອງລາວອີກ. ເພາະຈົ່ງ
ເບິ່ງ, ພວກເຮົາຈະບໍ່ຍອມໃຫ້ລາວມາເປັນ
ຜູ້ປົກຄອງພວກເຮົາ, ເພາະເປັນເລື່ອງຂອງ
ພວກເຮົາຜູ້ເປັນອ້າຍທີ່ຈະປົກຄອງດູແລຜູ້
ຄົນພວກນີ້.
4 ບັດນີ້ຂ້າພະເຈົ້າບໍ່ໄດ້ບັນທຶກຄຳເວົ້າ
ທັງໝົດທີ່ພວກເຂົາໄດ້ຈົ່ມໃຫ້ຂ້າພະເຈົ້າ
ໃນແຜ່ນຈາລຶກເຫລົ່ານີ້. ແຕ່ມັນພຽງພໍສຳ
ລັບຂ້າພະເຈົ້າທີ່ຈະເວົ້າວ່າ, ພວກເຂົາໄດ້
ພະຍາຍາມຈະເອົາຊີວິດຂອງຂ້າພະເຈົ້າ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າໄດ້ ᵃເຕືອນຂ້າພະເຈົ້າວ່າ ຂ້າ
ພະເຈົ້າ ᵇນີໄຟຄວນໜີຈາກພວກເຂົາ ແລະ
ໜີໄປໃນຖິ່ນແຫ້ງແລ້ງກັນດານກັບຄົນທັງ
ໝົດທີ່ຈະໄປກັບຂ້າພະເຈົ້າ.
6 ດັ່ງ ນັ້ນ, ເຫດ ການ ໄດ້ ບັງ ເກີດ ຂຶ້ນ
ຄື ຂ້າພະເຈົ້ານີໄຟໄດ້ພາຄອບຄົວຂອງ
ຂ້າພະເຈົ້າໄປ ແລະ ᵃໂຊຣຳກັບຄອບຄົວ
ຂອງພວກເຂົາອີກ, ແລະ ແຊມ, ອ້າຍຂອງ
ຂ້າພະເຈົ້າກັບຄອບຄົວຂອງລາວ, ແລະ
ຢາໂຄບກັບໂຢເຊັບ, ນ້ອງຊາຍຂອງຂ້າພະ
ເຈົ້າ, ແລະ ນ້ອງສາວຂອງຂ້າພະເຈົ້າອີກ.
ແລະ ທຸກຄົນທີ່ຈະໄປກັບຂ້າພະເຈົ້າ. ແລະ
ທຸກຄົນທີ່ຈະໄປກັບຂ້າພະເຈົ້າຄືຜູ້ທີ່ເຊື່ອ
ໃນ ᵇການເຕືອນ ແລະ ການເປີດເຜີຍຂອງ
ພຣະເຈົ້າ; ດັ່ງນັ້ນ, ພວກເຂົາໄດ້ເຊື່ອຟັງຄຳ
ເວົ້າຂອງຂ້າພະເຈົ້າ.
7 ແລະ ພວກເຮົາໄດ້ເອົາຜ້າເຕັ້ນຂອງ
ພວກເຮົາ ແລະ ເຄື່ອງຂອງຕ່າງໆທີ່ຈະເອົາ
ໄປກັບພວກເຮົາໄດ້ ແລະ ໄດ້ເດີນທາງໄປ
ໃນຖິ່ນແຫ້ງແລ້ງກັນດານຫລາຍມື້. ແລະ
ຫລັງຈາກພວກເຮົາໄດ້ເດີນທາງໄປເປັນ
ເວລາຫລາຍມື້ ພວກເຮົາໄດ້ຕັ້ງຜ້າເຕັ້ນ
ຂອງພວກເຮົາຂຶ້ນ.
8 ແລະ ຜູ້ຄົນຂອງຂ້າພະເຈົ້າຢາກໃຫ້
ພວກເຮົາເອີ້ນຊື່ບ່ອນນັ້ນວ່າ ᵃນີໄຟ; ດັ່ງນັ້ນ
ພວກເຮົາຈຶ່ງໄດ້ເອີ້ນບ່ອນນັ້ນວ່າ ນີໄຟ.
9 ແລະ ຄົນທັງໝົດທີ່ຢູ່ກັບຂ້າພະເຈົ້າໄດ້
ຍອມເອີ້ນຕົນເອງວ່າເປັນ ᵃຄົນຂອງນີໄຟ.
10 ແລະ ພວກເຮົາໄດ້ຍຶດຖືທີ່ຈະຮັກສາ
ຄຳພິພາກສາ, ແລະ ຂໍ້ກຳນົດ, ແລະ ພຣະ
ບັນຍັດຂອງພຣະຜູ້ເປັນເຈົ້າໃນທຸກສິ່ງທຸກ

**5** 1*ກ* 2 ນຟ 4:13–14.
3*ກ* 1 ນຟ 16:37–38; ມຊຢ 10:14–15.
5*ກ* ຄມພ ດົນໃຈ, ການດົນໃຈ.
*ຂ* ມຊຢ 10:13.
6*ກ* 1 ນຟ 4:35; 16:7; 2 ນຟ 1:30–32.
*ຂ* ຄມພ ເຕືອນ, ຄຳເຕືອນ.
8*ກ* ອມນ 1:12, 27; ມຊຢ 9:1–4; 28:1.
9*ກ* ຢຄ 1:13–14.

ຢ່າງ, ຕາມ [ກ]ກົດຂອງໂມເຊ.

11 ແລະ ພຣະຜູ້ເປັນເຈົ້າໄດ້ຢູ່ກັບພວກເຮົາ, ແລະ ພວກເຮົາໄດ້ຮຸ່ງເຮືອງຢ່າງຍິ່ງ; ເພາະພວກເຮົາໄດ້ຫວ່ານເມັດພືດ, ແລະ ພວກເຮົາໄດ້ເກັບກ່ຽວອີກເປັນຈຳນວນຫລວງຫລາຍ. ແລະ ພວກເຮົາໄດ້ເລີ່ມລ້ຽງສັດ ແລະ ຝູງສັດໃຊ້ງານ, ແລະ ສັດທຸກຊະນິດ.

12 ແລະ ຂ້າພະເຈົ້ານີໄຟໄດ້ນຳແຜ່ນຈາລຶກທີ່ໄດ້ບັນທຶກໄວ້ໃນ [ກ]ແຜ່ນຈາລຶກທອງເຫລືອງມານຳ ແລະ [ຂ]ລູກກົມ ຫລື [ຄ]ເຂັມຊີ້ທິດ ຊຶ່ງໄດ້ຕຽມໄວ້ໃຫ້ບິດາຂອງຂ້າພະເຈົ້າໂດຍພຣະຫັດຂອງພຣະຜູ້ເປັນເຈົ້າ, ຕາມທີ່ມີບັນທຶກໄວ້ນັ້ນ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ເລີ່ມຮຸ່ງເຮືອງຂຶ້ນຢ່າງຍິ່ງ ແລະ ມີຄົນທະວີຂຶ້ນໃນແຜ່ນດິນນັ້ນ.

14 ແລະ ຂ້າພະເຈົ້ານີໄຟໄດ້ເອົາ [ກ]ດາບຂອງລາບານມາ, ແລະ ໄດ້ເຮັດດາບແບບນັ້ນຫລາຍດວງ, ຢ້ານວ່າດ້ວຍວິທີໃດວິທີໜຶ່ງ ຜູ້ຄົນຊຶ່ງບັດນີ້ມີຊື່ວ່າ [ຂ]ຊາວເລມັນຈະມາຮຸກຮານພວກເຮົາ ແລະ ຈະທຳລາຍພວກເຮົາ; ເພາະຂ້າພະເຈົ້າຮູ້ເຖິງຄວາມກຽດຊັງຂອງພວກເຂົາທີ່ມີຕໍ່ຂ້າພະເຈົ້າ ແລະ ລູກຫລານຂອງຂ້າພະເຈົ້າ ແລະ ຄົນທີ່ມີຊື່ວ່າ ຜູ້ຄົນຂອງຂ້າພະເຈົ້າ.

15 ແລະ ຂ້າພະເຈົ້າໄດ້ສິດສອນຜູ້ຄົນຂອງຂ້າພະເຈົ້າໃຫ້ສ້າງເຮືອນຊານ ແລະ ໃຫ້ເຮັດວຽກດ້ວຍໄມ້ ແລະ ດ້ວຍ [ກ]ເຫລັກ ແລະ ດ້ວຍທອງແດງ ແລະ ດ້ວຍທອງເຫລືອງ ແລະ ດ້ວຍເຫລັກກ້າ, ແລະ ດ້ວຍຄຳ ແລະ ດ້ວຍເງິນ ແລະ ດ້ວຍແຮ່ທາດທີ່ມີຄ່າ ຊຶ່ງມີຢູ່ຢ່າງຫລວງຫລາຍ.

16 ແລະ ຂ້າພະເຈົ້ານີໄຟໄດ້ສ້າງ [ກ]ພຣະວິຫານໄວ້ແຫ່ງໜຶ່ງ; ແລະ ຂ້າພະເຈົ້າໄດ້ສ້າງຕາມແບບ [ຂ]ພຣະວິຫານຂອງໂຊໂລໂມນ ແຕ່ບໍ່ໄດ້ສ້າງດ້ວຍສິ່ງທີ່ [ຄ]ມີຄ່າຫລາຍຢ່າງເຊັ່ນນັ້ນ; ເພາະຫາມັນບໍ່ໄດ້ໃນແຜ່ນດິນນີ້, ດັ່ງນັ້ນ, ຈຶ່ງສ້າງໃຫ້ຄືກັນກັບພຣະວິຫານຂອງໂຊໂລໂມນບໍ່ໄດ້. ແຕ່ແບບຂອງການສ້າງນັ້ນຄືກັນກັບພຣະວິຫານຂອງໂຊໂລໂມນ ແລະ ຝີມືໃນການສ້າງນັ້ນດີເລີດ.

17 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້ານີໄຟໄດ້ໃຫ້ຜູ້ຄົນຂອງຂ້າພະເຈົ້າມີຄວາມ [ກ]ດຸໝັ່ນ ແລະ ທຳງານດ້ວຍຝີມືຂອງພວກເຂົາ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາຢາກໃຫ້ຂ້າພະເຈົ້າເປັນ [ກ]ກະສັດຂອງພວກເຂົາ. ແຕ່ຂ້າພະເຈົ້ານີໄຟປາດຖະໜາບໍ່ໃຫ້ພວກເຂົາມີກະສັດ; ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າກໍໄດ້ເຮັດເພື່ອພວກເຂົາຕາມອຳນາດຂອງຂ້າພະເຈົ້າ.

19 ແລະ ຈົ່ງເບິ່ງ, ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ສຳເລັດແລ້ວຕໍ່ພວກອ້າຍຂອງຂ້າພະເຈົ້າ, ຊຶ່ງພຣະອົງໄດ້ຮັບສັ່ງກ່ຽວກັບພວກເຂົາວ່າ, ຂ້າພະເຈົ້າຈະເປັນຜູ້ປົກຄອງ ແລະ ຜູ້ສອນຂອງພວກເຂົາ. ດັ່ງນັ້ນ, ຂ້າ

10 ກ 2 ນຟ 11:4. ຄມພ ກົດຂອງໂມເຊ.
12 ກ ມຊຢ 1:3–4. ຄມພ ແຜ່ນຈາລຶກ.
ຂ ມຊຢ 1:16.
ຄ 1 ນຟ 16:10, 16, 26; 18:12, 21; ແອວ 37:38–47; ຄພ 17:1.
14 ກ 1 ນຟ 4:9; ຢຄ 1:10; ຄມ 1:13.
ຂ ຄມພ ຊາວເລມັນ.
15 ກ ອທ 10:23.
16 ກ ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
ຂ 1 ກສ 6; 2 ຂຄ 3.
ຄ ຄພ 124:26–27.
17 ກ ປຖກ 3:19; ຄພ 42:42.
18 ກ ຢຄ 1:9, 11.

ພະເຈົ້າຈຶ່ງໄດ້ເປັນ [ກ]ຜູ້ປົກຄອງ ແລະ [ຂ]ຜູ້
ສອນຂອງພວກເຂົາຕາມພຣະບັນຍັດຂອງ
ພຣະຜູ້ເປັນເຈົ້າ ຈົນເຖິງເວລາທີ່ພວກເຂົາ
ພະຍາຍາມຈະເອົາຊີວິດຂອງຂ້າພະເຈົ້າ.
20 ດັ່ງນັ້ນ, ພຣະຄຳຂອງພຣະຜູ້ເປັນເຈົ້າ
ຈຶ່ງສຳເລັດ ຊຶ່ງພຣະອົງໄດ້ຮັບສັ່ງກັບຂ້າພະ
ເຈົ້າ, ມີຄວາມວ່າ: ຕາບໃດທີ່ພວກເຂົາ [ກ]ບໍ່
ເຊື່ອຟັງຖ້ອຍຄຳຂອງເຈົ້າ ພວກເຂົາຈະຖືກ
ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນ
ເຈົ້າ. ແລະ ຈົ່ງເບິ່ງ, ພວກເຂົາໄດ້ຖືກ [ຂ]ຕັດ
ອອກຈາກທີ່ປະທັບຂອງພຣະອົງແລ້ວ.
21 ແລະ ພຣະອົງໄດ້ກະທຳໃຫ້ [ກ]ການ
ສາບແຊ່ງມາເຖິງພວກເຂົາ, ແທ້ຈິງແລ້ວ,
ແມ່ນການສາບແຊ່ງຢ່າງສາຫັດ ເພາະ
ຄວາມຊົ່ວຮ້າຍຂອງພວກເຂົາ. ເພາະຈົ່ງ
ເບິ່ງ, ພວກເຂົາໄດ້ເຮັດໃຈແຂງກະດ້າງ
ຕໍ່ພຣະອົງຈົນວ່າ ພວກເຂົາກາຍເປັນຫີນ
ເຫລັກໄປ; ດັ່ງນັ້ນ, ເນື່ອງຈາກວ່າພວກເຂົາ
ຂາວ ແລະ ຈົບງາມ ແລະ [ຂ]ໜ້າຊົມຢ່າງຍິ່ງ
ເພື່ອພວກເຂົາຈະບໍ່ໄດ້ເປັນຜູ້ຊັກຈູງຜູ້ຄົນ
ຂອງຂ້າພະເຈົ້າໄປທາງຜິດ ອົງພຣະຜູ້ເປັນ
ເຈົ້າຈຶ່ງໄດ້ເຮັດໃຫ້ພວກເຂົາເກີດມີ [ຄ]ຜິວ
ດຳ.
22 ແລະ ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງ
ນີ້: ເຮົາຈະເຮັດໃຫ້ພວກເຂົາເປັນທີ່ [ກ]ໜ້າ
ກຽດຊັງຕໍ່ຜູ້ຄົນຂອງເຈົ້າ ນອກຈາກວ່າ
ພວກເຂົາຈະກັບໃຈຈາກຄວາມຊົ່ວຮ້າຍ
ຂອງພວກເຂົາເທົ່ານັ້ນ.
23 ແລະ ລູກຫລານຂອງຜູ້ທີ່ [ກ]ຮ່ວມກັບ
ລູກຫລານຂອງພວກເຂົາຈະຖືກສາບແຊ່ງ;
ເພາະພວກເຂົາຈະຖືກສາບແຊ່ງແມ່ນດ້ວຍ
ການສາບແຊ່ງເຊັ່ນດຽວກັນ. ແລະ ພຣະ
ຜູ້ເປັນເຈົ້າໄດ້ຮັບສັ່ງໄວ້ ແລະ ມັນໄດ້ເປັນ
ໄປ.
24 ແລະ ເປັນຍ້ອນການສາບແຊ່ງ ຊຶ່ງ
ຢູ່ກັບພວກເຂົາ, ພວກເຂົາຈຶ່ງກາຍເປັນ
ຄົນ [ກ]ກຽດຄ້ານ, ເຕັມໄປດ້ວຍການກໍ່ກວນ
ແລະ ເລ່ຫລ່ຽມ, ແລະ ຊອກຫາສັດທີ່ເປັນ
ເຫຍື່ອຂອງສັດໃນຖິ່ນແຫ້ງແລ້ງກັນດານ.
25 ແລະ ອົງພຣະຜູ້ເປັນເຈົ້າ ໄດ້ກ່າວກັບ
ຂ້າພະເຈົ້າວ່າ: ພວກເຂົາຈະເປັນໄພພິບັດ
ຕໍ່ລູກຫລານຂອງເຈົ້າເພື່ອກະຕຸ້ນພວກເຂົາ
ໃຫ້ນຶກເຖິງເຮົາ; ແລະ ຕາບໃດທີ່ພວກເຂົາ
ຍັງບໍ່ຄິດເຖິງເຮົາ ແລະ ບໍ່ເຊື່ອຟັງຄຳເວົ້າ
ຂອງເຮົາ, ພວກເຂົາຈະຂ້ຽນຕີພວກນີ້ຈົນ
ເຖິງຄວາມພິນາດ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້ານີໄຟໄດ້ [ກ]ແຕ່ງຕັ້ງຢາໂຄບກັບ
ໂຢເຊັບເພື່ອພວກເຂົາຈະໄດ້ເປັນປະໂລ
ຫິດ ແລະ ຜູ້ສອນໃນແຜ່ນດິນຂອງຜູ້ຄົນ
ຂອງຂ້າພະເຈົ້າ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາມີຊີວິດຢູ່ຕາມທາງແຫ່ງຄວາມ
ສຸກ.
28 ແລະ ສາມສິບປີຜ່ານໄປນັບແຕ່ພວກ
ເຮົາໄດ້ອອກຈາກເຢຣູຊາເລັມ.
29 ແລະ ຂ້າພະເຈົ້ານີໄຟໄດ້ຮັກສາບັນ
ທຶກກ່ຽວກັບຜູ້ຄົນຂອງຂ້າພະເຈົ້າໄວ້ຈົນ
ເຖິງບັດນີ້ໃນແຜ່ນຈາລຶກຂອງຂ້າພະເຈົ້າ
ຊຶ່ງຂ້າພະເຈົ້າເປັນຜູ້ເຮັດຂຶ້ນ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ອົງ
ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ:

---

19 *ກ* 1 ນຟ 2:22.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ.
20 *ກ* 2 ນຟ 2:21.
*ຂ* ແອວ 9:14.
21 *ກ* ຄມພ ສາບແຊ່ງ, ຄຳສາບແຊ່ງ.
*ຂ* 4 ນຟ 1:10.
*ຄ* 2 ນຟ 26:33; 3 ນຟ 2:14–16.
22 *ກ* 1 ນຟ 12:23.
23 *ກ* ຄມພ ແຕ່ງງານ, ການແຕ່ງງານ—ການແຕ່ງງານກັບຄົນຕ່າງສາດສະໜາ.
24 *ກ* ຄມພ ກຽດຄ້ານ, ຄວາມກຽດຄ້ານ.
26 *ກ* ຢຄ 1:18–19; ມຊຍ 23:17.

ຈຶ່ງ ເຮັດ [ກ]ແຜ່ນ ຈາລຶກ ອີກ ຊຸດ ໜຶ່ງ; ແລະ
ເຈົ້າຈຶ່ງບັນທຶກຫລາຍເລື່ອງທີ່ດີໃນສາຍຕາ
ຂອງເຮົາເພື່ອຜົນປະໂຫຍດຂອງຜູ້ຄົນຂອງ
ເຈົ້າ.
31 ດັ່ງນັ້ນ ເພື່ອ ເປັນ ການ ເຊື່ອ ຟັງ ພຣະ
ບັນ ຍັດ ຂອງ ພຣະ ຜູ້ ເປັນ ເຈົ້າ, ຂ້າພະ ເຈົ້າ
ນີໄຟຈຶ່ງໄດ້ເຮັດ [ກ]ແຜ່ນຈາລຶກເຫລົ່ານີ້ ຊຶ່ງ
ຂ້າພະເຈົ້າໄດ້ຈາລຶກເລື່ອງເຫລົ່ານີ້ໄວ້ໃນ
ນັ້ນ.
32 ແລະ ຂ້າພະເຈົ້າໄດ້ຈາລຶກເລື່ອງທີ່ພໍ
ພຣະ ໄທຕໍ່ພຣະເຈົ້າ. ແລະ ຖ້າຫາກຜູ້ຄົນ
ຂອງຂ້າພະເຈົ້າພໍໃຈ ເລື່ອງຂອງພຣະເຈົ້າ
ພວກເຂົາຈະພໍໃຈກັບການບັນທຶກຂອງຂ້າ
ພະເຈົ້າ ຊຶ່ງມີຢູ່ໃນແຜ່ນຈາລຶກເຫລົ່ານີ້.
33 ແລະ ຖ້າຜູ້ຄົນຂອງຂ້າພະເຈົ້າປາດ
ຖະໜາຢາກຮູ້ປະຫວັດສາດຂອງຂ້າພະ
ເຈົ້າໂດຍລະອຽດນັ້ນ ພວກເຂົາຕ້ອງຄົ້ນຫາ
ໃນແຜ່ນຈາລຶກອີກຊຸດໜຶ່ງຂອງຂ້າພະເຈົ້າ.
34 ແລະ ມັນພຽງພໍສຳລັບຂ້າພະເຈົ້າທີ່
ຈະ ເວົ້າວ່າ ສີ່ສິບປີຜ່ານໄປ, ແລະ ພວກ
ເຮົາມີສົງຄາມ ແລະ ການຂັດແຍ້ງກັບພວກ
ອ້າຍຂອງພວກເຮົາ.

## ບົດທີ 6

*ຢາໂຄບເລົ່າປະຫວັດສາດຂອງຊາວຢິວ: ການເປັນຊະເລີຍໃນບາບີໂລນ ແລະ ການກັບຄືນ; ການປະຕິບັດສາດສະໜາກິດ ແລະ ການຄຶງໄວ້ເທິງໄມ້ກາງແຂນຂອງພຣະຜູ້ບໍລິສຸດແຫ່ງອິດສະຣາເອນ; ຄວາມຊ່ວຍເຫລືອທີ່ໄດ້ຮັບຈາກຄົນຕ່າງຊາດ; ການຟື້ນຟູໃນຍຸກສຸດທ້າຍຂອງຊາວຢິວເມື່ອພວກເຂົາເຊື່ອຖືໃນພຣະເມຊີອາ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ຄຳ ເວົ້າຂອງຢາໂຄບ, ນ້ອງຊາຍຂອງ
ນີໄຟ, ຊຶ່ງໄດ້ເວົ້າກັບຜູ້ຄົນຂອງນີໄຟວ່າ:
2 ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຂ້າພະເຈົ້າຢາໂຄບ ໂດຍທີ່ໄດ້ຖືກ
ເອີ້ນຈາກພຣະເຈົ້າ, ແລະ ໄດ້ຖືກແຕ່ງຕັ້ງ
ຕາມວິທີແຫ່ງຖານະອັນສັກສິດຂອງພຣະ
ອົງ, ແລະ ຖືກແຕ່ງຕັ້ງໂດຍນີໄຟອ້າຍຂອງ
ຂ້າພະເຈົ້າ, ຜູ້ທີ່ທ່ານນັບຖືເປັນ [ກ]ກະສັດ
ຫລື ຜູ້ຄຸ້ມຄອງ ແລະ ຜູ້ທີ່ທ່ານເພິ່ງພາເພື່ອ
ຄວາມປອດໄພ, ຈົ່ງເບິ່ງ ທ່ານຮູ້ວ່າຂ້າພະ
ເຈົ້າກ່າວກັບທ່ານມາຫລາຍຕໍ່ຫລາຍເລື່ອງ
ແລ້ວ.
3 ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າຂໍເວົ້າ
ກັບ ທ່ານອີກ; ເພາະຂ້າພະເຈົ້າປາດຖະ
ໜາ ເພື່ອຄວາມຜາສຸກຂອງ ຈິດວິນຍານ
ຂອງທ່ານ. ແທ້ຈິງແລ້ວ, ແມ່ນຄວາມຫ່ວງ
ໃຍ ຂອງຂ້າພະ ເຈົ້າທີ່ ມີ ຕໍ່ ທ່ານນັ້ນ ໃຫຍ່
ຫລວງ; ແລະ ທ່ານເອງກໍຮູ້ຈັກແລ້ວວ່າມັນ
ເປັນຢູ່ຕະຫລອດມາ. ເພາະຂ້າພະເຈົ້າໄດ້
ແນະນຳທ່ານດ້ວຍສຸດຄວາມພາກພຽນ;
ແລະ ຂ້າພະເຈົ້າສິດສອນຕາມຄຳເວົ້າຂອງ
ບິດາຂອງຂ້າພະເຈົ້າ; ແລະ ຂ້າພະເຈົ້າຂໍ
ເວົ້າກັບທ່ານກ່ຽວກັບທຸກຢ່າງທີ່ໄດ້ບັນທຶກ
ໄວ້ນັບຕັ້ງແຕ່ການສ້າງໂລກມາ.
4 ແລະ ບັດນີ້, ຈົ່ງ ເບິ່ງຂ້າພະເຈົ້າຈະ
ເວົ້າກັບທ່ານກ່ຽວກັບເລື່ອງທີ່ເປັນຢູ່ ແລະ
ເລື່ອງທີ່ຈະມາເຖິງ; ດັ່ງນັ້ນ, ຂ້າພະເຈົ້າຈະ
ອ່ານຄຳເວົ້າຂອງ [ກ]ເອຊາຢາຕໍ່ທ່ານ. ແລະ
ເປັນຄຳເວົ້າທີ່ອ້າຍຂອງຂ້າພະເຈົ້າປາດ
ຖະໜາຢາກໃຫ້ຂ້າພະເຈົ້າເວົ້າກັບທ່ານ.
ແລະ ຂ້າພະເຈົ້າຂໍເວົ້າກັບທ່ານເພາະເຫັນ
ແກ່ຜົນປະໂຫຍດຂອງທ່ານ, ເພື່ອທ່ານຈະ
ໄດ້ຮຽນຮູ້ ແລະ ຖວາຍບາລະມີແດ່ພຣະ
ນາມຂອງພຣະເຈົ້າຂອງທ່ານ.

30 *ກ* 1 ນຟ 19:1–6.
31 *ກ* ຄມພ ແຜ່ນຈາລຶກ.
**6** 2 *ກ* ຢຄ 1:9, 11.
4 *ກ* 3 ນຟ 23:1.

5 ແລະ ບັດນີ້, ຄຳເວົ້າທີ່ຂ້າພະເຈົ້າຈະ
ອ່ານເປັນຄຳເວົ້າຂອງ ເອຊາຢາກ່ຽວກັບ
ເຊື້ອສາຍອິດສະຣາເອນທັງໝົດ; ດັ່ງນັ້ນ,
ມັນຈະປຽບທຽບໄດ້ກັບທ່ານ, ເພາະທ່ານ
ເປັນ ເຊື້ອ ສາຍ ອິດສະ ຣາເອນ. ແລະ ມີ
ຫລາຍຢ່າງທີ່ເອຊາຢາໄດ້ເວົ້າໄວ້ ຊຶ່ງຈະ
ປຽບທຽບໄດ້ກັບທ່ານ ເພາະທ່ານເປັນເຊື້ອ
ສາຍອິດສະຣາເອນ.
6 ແລະ ບັດນີ້, ນີ້ຄືຂໍ້ຄວາມ: ອົງພຣະຜູ້
ເປັນເຈົ້າໄດ້ກ່າວ [ກ]ດັ່ງນີ້: ຈົ່ງເບິ່ງ, ເຮົາຈະ
ຍົກມືກວັກຄົນຕ່າງຊາດ ແລະ ຍົກ [ຂ]ສັນ
ຍານຂອງເຮົາຕໍ່ຜູ້ຄົນ; ແລະ ເຂົາຈະອູ້ມລູກ
ຊາຍຂອງເຈົ້າມາໃນອ້ອມແຂນຂອງເຂົາ,
ແລະ ສ່ວນລູກສາວຂອງເຈົ້ານັ້ນ ເຂົາຈະ
ໃສ່ບ່າແບກມາ.
7 ແລະ ກະສັດຈະເປັນພໍ່ລ້ຽງຂອງເຈົ້າ,
ແລະ ລາຊິນີ ທັງຫລາຍ ຈະ ເປັນ ແມ່ລ້ຽງ
ຂອງເຈົ້າ; ເຂົາເຫລົ່ານັ້ນຈະກົ້ມໜ້າລົງເຖິງ
ດິນກາບເຈົ້າ, ແລະ ເຂົາຈະເລຍຂີ້ຝຸ່ນທີ່ຕີນ
ຂອງເຈົ້າ; ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະ
ຜູ້ເປັນເຈົ້າ ຜູ້ທີ່ [ກ]ລໍຄອຍເຮົາຈະບໍ່ປະສົບ
ຄວາມອັບອາຍ.
8 ແລະ ບັດນີ້, ຂ້າພະເຈົ້າຢາໂຄບ ຈະ
ເວົ້າບາງຢ່າງກ່ຽວກັບຂໍ້ຄວາມນີ້. ເພາະຈົ່ງ
ເບິ່ງ, ພຣະຜູ້ເປັນເຈົ້າໄດ້ສະແດງກັບຂ້າພະ
ເຈົ້າວ່າຄົນທີ່ຢູ່ໃນ [ກ]ເຢຣູຊາເລັມຊຶ່ງພວກ
ເຮົາໜີຈາກມານັ້ນໄດ້ຖືກຂ້າຕາຍ ແລະ
ຖືກ [ຂ]ຈັບໄປເປັນຊະເລີຍແລ້ວ.
9 ເຖິງຢ່າງໃດກໍຕາມ, ພຣະຜູ້ເປັນເຈົ້າ
ໄດ້ສະແດງຕໍ່ຂ້າພະເຈົ້າວ່າ ພວກເຂົາຈະ
[ກ]ກັບຄືນມາອີກ. ແລະ ພຣະອົງຈະສະແດງ
ພຣະອົງເອງໃຫ້ປະຈັກແກ່ຂ້າພະເຈົ້າອີກ
ວ່າ ອົງພຣະຜູ້ເປັນເຈົ້າພຣະຜູ້ບໍລິສຸດຂອງ
ອິດສະຣາເອນຈະສະແດງພຣະອົງເອງ
ໃຫ້ປະຈັກແກ່ພວກເຂົາໃນເນື້ອໜັງ; ແລະ
ຫລັງຈາກພຣະອົງໄດ້ສະແດງພຣະອົງເອງ
ໃຫ້ປະຈັກແລ້ວ ພວກເຂົາຈະຂ້ຽນຕີພຣະ
ອົງແລ້ວ [ຂ]ຄຶງພຣະອົງໄວ້ເທິງໄມ້ກາງແຂນ
ຕາມຄຳເວົ້າຂອງທູດ ຊຶ່ງໄດ້ກ່າວເລື່ອງນີ້
ກັບຂ້າພະເຈົ້າ.
10 ແລະ ຫລັງ ຈາກ ພວກ ເຂົາ ເຮັດ ໃຈ
ແຂງກະດ້າງ ແລະ ແຂງຄໍຕໍ່ພຣະຜູ້ບໍລິສຸດ
ຂອງອິດສະຣາເອນແລ້ວ, ຈົ່ງເບິ່ງ, [ກ]ການ
ພິພາກສາຂອງພຣະຜູ້ບໍລິສຸດຂອງອິດສະ
ຣາເອນຈະເກີດກັບພວກເຂົາ. ແລະ ວັນ
ນັ້ນຈະມາເຖິງ ຊຶ່ງພວກເຂົາຈະຖືກລົງທັນ
ແລະ ເປັນທຸກ.
11 ດັ່ງນັ້ນ, ຫລັງຈາກພວກເຂົາຖືກຂັບ
ໄລ່ໄປມາເພາະທູດໄດ້ກ່າວໄວ້ດັ່ງນັ້ນ, ຄົນ
ຈຳນວນຫລວງຫລາຍຈະເປັນທຸກໃນເນື້ອ
ໜັງ ແລະ ຈະບໍ່ໃຫ້ເຖິງຕາຍເພາະຄຳອະ
ທິຖານຂອງຜູ້ມີສັດທາ; ພວກເຂົາຈະກະ
ຈັດກະຈາຍໄປ ແລະ ຖືກລົງທັນ; ເຖິງຢ່າງ
ໃດກໍຕາມ, ພຣະຜູ້ເປັນເຈົ້າຍັງຈະເມດຕາ
ພວກເຂົາ, ເພາະ [ກ]ເວລາທີ່ພວກເຂົາຈະ
[ຂ]ມາຮູ້ກ່ຽວກັບພຣະຜູ້ໄຖ່ຂອງພວກເຂົາ,
ພວກເຂົາຈະມາ [ຄ]ເຕົ້າໂຮມກັນອີກໃນແຜ່ນ
ດິນຊຶ່ງເປັນມູນມໍລະດົກຂອງພວກເຂົາ.

---

6 ກ ອຊຢ 49:22–23.
ຂ ຄມພ ປ້າຍສັນຍານ.
7 ກ ຄພ 133:45;
ມຊ 1:6.
8 ກ ອສທ 2:6;
1 ນຟ 7:13;
2 ນຟ 25:10;
ອມນ 1:15;
ຮລມ 8:20–21.
ຂ 2 ກສ 24:10–16; 25:1–12.
ຄມພ ອິດສະຣາເອນ—
ການກະຈັດກະຈາຍຂອງ
ຊາວອິດສະຣາເອນ.
9 ກ 1 ນຟ 10:3.
ຂ 1 ນຟ 19:10, 13;
ມຊຢ 3:9;
3 ນຟ 11:14–15.
ຄມພ ຄຶງ, ການຄຶງ.
10 ກ ມທ 27:24–25.
11 ກ 1 ນຟ 22:11–12;
2 ນຟ 9:2.
ຂ ຣສອ 3:5.
ຄ ຄມພ ອິດສະຣາເອນ—
ການເຕົ້າໂຮມຊາວ
ອິດສະຣາເອນ.

12 ແລະ [ກ]ຄົນຕ່າງຊາດຜູ້ທີ່ສາດສະດາ
ໄດ້ບັນທຶກເລື່ອງຂອງພວກເຂົາຍ່ອມເປັນ
ສຸກ; ແລະ ຈົ່ງເບິ່ງ, ຖ້າຫາກເປັນໄປ ວ່າ
ພວກເຂົາຈະກັບໃຈ ແລະ ບໍ່ຕໍ່ສູ້ກັບຊີໂອນ
ແລະ ບໍ່ ເຂົ້າ ຮ່ວມກັບ ສາດ ສະ ໜາ ຈັກ
ໃຫຍ່ ແລະ [ຂ]ໜ້າກຽດຊັງນັ້ນພວກເຂົາຈະ
ລອດ; ເພາະອົງພຣະຜູ້ເປັນເຈົ້າຈະເຮັດໃຫ້
[ຄ]ພັນທະສັນຍາຂອງພຣະອົງທີ່ກະທຳໄວ້
ກັບລູກຫລານຂອງພຣະອົງສຳເລັດ ແລະ
ເພື່ອເຫດນີ້ສາດສະດາຈຶ່ງໄດ້ບັນທຶກເລື່ອງ
ເຫລົ່ານີ້ໄວ້.
13 ດັ່ງນັ້ນ, ພວກທີ່ຕໍ່ສູ້ກັບຊີໂອນ ແລະ
ຜູ້ຄົນແຫ່ງພັນທະສັນຍາຂອງພຣະຜູ້ເປັນ
ເຈົ້າ ຈະເລຍຂີ້ຝຸ່ນຈາກຕີນຂອງພວກເຂົາ
ແລະ ຜູ້ຄົນຂອງພຣະຜູ້ເປັນເຈົ້າຈະບໍ່ [ກ]ໜ້າ
ອາຍ. ເພາະຜູ້ຄົນຂອງພຣະຜູ້ເປັນເຈົ້າຄື ຜູ້
ທີ່ [ຂ]ຄອຍຖ້າພຣະອົງ ເພາະພວກເຂົາຍັງ
ຄອຍຖ້າການສະເດັດມາຂອງພຣະເມຊີ
ອາ.
14 ແລະ ຈົ່ງເບິ່ງ, ຕາມຄຳເວົ້າຂອງສາດ
ສະດາ, ພຣະເມຊີອາຈະແຕ່ງຕັ້ງພຣະອົງ
ເອງ ເປັນຄັ້ງ [ກ]ທີສອງ ເພື່ອ ນຳ ພາພວກ
ເຂົາກັບຄືນ; ດັ່ງນັ້ນ, ພຣະອົງຈະສະແດງ
ພຣະ ອົງເອງ [ຂ]ໃຫ້ປະຈັກ ແກ່ພວກ ເຂົາ
ດ້ວຍ ອຳນາດ ແລະ ລັດສະໝີພາບ ອັນ
ຍິ່ງໃຫຍ່ ຈົນເຖິງ [ຄ]ຄວາມພິນາດຂອງສັດ
ຕູຂອງພວກເຂົາ; ເມື່ອມື້ນັ້ນມາເຖິງເວລາ
ທີ່ພວກເຂົາຈະເຊື່ອຖືໃນພຣະອົງ; ແລະ
ພຣະອົງຈະບໍ່ທຳລາຍຜູ້ໃດທີ່ເຊື່ອຖືໃນ
ພຣະອົງ.
15 ແລະ ພວກທີ່ບໍ່ເຊື່ອໃນພຣະອົງຈະ
ຖືກ [ກ]ທຳລາຍດ້ວຍ [ຂ]ໄຟ, ແລະ ດ້ວຍພະ
ຍຸ ຝົນ ຟ້າຄະນອງ, ແລະ ດ້ວຍແຜ່ນດິນ
ໄຫວ, ແລະ ດ້ວຍການນອງເລືອດ ແລະ
ດ້ວຍ [ຄ]ພະຍາດໂລຄາ, ແລະ ດ້ວຍຄວາມ
ອຶດຢາກ. ແລະ ພວກເຂົາຈະຮູ້ວ່າ ພຣະ
ອົງຄືພຣະເຈົ້າ, ພຣະຜູ້ບໍລິສຸດຂອງອິດສະ
ຣາເອນ.
16 [ກ]ເພາະ ຈະ ເອົາ ເຫຍື່ອ ໄປ ຈາກ ຜູ້ ທີ່
ມີ ກຳລັງ ຫລື ຈະ ຊ່ວຍ [ຂ]ຊະ ເລີຍ ຂອງຜູ້
ຊະນະໃຫ້ພົ້ນໄດ້ບໍ?
17 ແຕ່ ພຣະຜູ້ ເປັນ ເຈົ້າ ໄດ້ກ່າວ ດັ່ງ ນີ້:
ເຖິງແມ່ນ [ກ]ຊະເລີຍຂອງຄົນທີ່ຍິ່ງໃຫຍ່ກໍຈະ
ຖືກເອົາໄປ, ແລະ ເຫຍື່ອຂອງຄົນທີ່ຫ້ຽມ
ໂຫດກໍຈະຖືກຊ່ວຍໃຫ້ພົ້ນ; ເພາະ [ຂ]ພຣະ
ເຈົ້າຜູ້ມີລິດເດດຈະ [ຄ]ປົດປ່ອຍຜູ້ຄົນແຫ່ງ
ພັນທະສັນຍາຜູ້ເປັນຂອງພຣະອົງ. ເພາະ
ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ເຮົາຈະຕໍ່ສູ້
ກັບຜູ້ທີ່ຕໍ່ສູ້ເຈົ້າ—
18 ແລະ ເຮົາຈະໃຫ້ຜູ້ບີບບັງຄັບເຈົ້າກິນ
ເນື້ອຂອງຕົນເອງ; ແລະ ເຂົາຈະເມົາເລືອດ
ຂອງ ເຂົາ ເອງ ເໝືອນ ເມົາ ເຫລົ້າ ອະງຸ່ນ;
ແລະ ມະນຸດທັງປວງຈະຮູ້ວ່າ ເຮົາພຣະ
ເຈົ້າຄືພຣະຜູ້ຊ່ວຍໃຫ້ລອດຂອງເຈົ້າ ແລະ
[ກ]ພຣະຜູ້ໄຖ່ຂອງເຈົ້າ, ແລະ [ຂ]ພຣະຜູ້ມີລິດ
ທານຸພາບຂອງຢາໂຄບ.

12 *ກ* 1 ນຟ 14:1–2; 2 ນຟ 10:9–10.
*ຂ* ຄມພ ມານ—ສາດສະໜາຈັກຂອງມານ.
*ຄ* ຄມພ ພັນທະສັນຍາຂອງອັບຣາຮາມ.
13 *ກ* 3 ນຟ 22:4.
*ຂ* ອຊຢ 40:31; 1 ນຟ 21:23; ຄພ 133:45.
14 *ກ* ອຊຢ 11:11; 2 ນຟ 25:17; 29:1.
*ຂ* 2 ນຟ 3:5.
*ຄ* 1 ນຟ 22:13–14.
15 *ກ* 2 ນຟ 10:16; 28:15; 3 ນຟ 16:8. ຄມພ ຍຸກສຸດທ້າຍ.
*ຂ* ຢຄ 6:3.
*ຄ* ຄພ 97:22–26.
16 *ກ* ອຊຢ 49:24–26.
*ຂ* ອສ ຜູ້ຄົນແຫ່ງພັນທະສັນຍາຂອງພຣະຜູ້ເປັນເຈົ້າ, ດັ່ງທີ່ໄດ້ກ່າວເຖິງໃນ ຂໍ້ທີ 17.
17 *ກ* 1 ນຟ 21:25.
*ຂ* ຄມພ ເຢໂຮວາ.
*ຄ* 2 ກສ 17:39.
18 *ກ* ຄມພ ພຣະຜູ້ໄຖ່.
*ຂ* ປຖກ 49:24; ອຊຢ 60:16.

## ບົດທີ 7

*ຢາໂຄບອ່ານຈາກໜັງສືເອຊາຢາຕໍ່: ເອຊາຢາກ່າວກ່ຽວກັບພຣະເມຊີອາ—ພຣະເມຊີອາຈະມີລີ້ນຂອງນັກປາດ—ພຣະອົງຈະຫັນຫລັງໃຫ້ຜູ້ຊ້ຽນຕີ—ພຣະອົງຈະບໍ່ຍອມຈຳນົນ—ປຽບທຽບກັບ ເອຊາຢາ 50. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແທ້ຈິງແລ້ວ, ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ເຮົາໄດ້ແຍກເຈົ້າອອກໄປ ຫລື ວ່າ ເຮົາໄດ້ປະຖິ້ມເຈົ້າຕະຫລອດໄປບໍ? ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ໜັງສືຢ່າຮ້າງຂອງແມ່ເຈົ້າຢູ່ໃສ? ເຮົາໄດ້ແຍກເຈົ້າໃຫ້ອອກໄປກັບໃຜ? ຫລື ວ່າເຮົາໄດ້ຂາຍເຈົ້າໃຫ້ເຈົ້າໜີ້ຄົນໃດຂອງເຮົາ? ແທ້ຈິງແລ້ວ, ເຮົາໄດ້ຂາຍເຈົ້າໃຫ້ຜູ້ໃດ? ຈົ່ງເບິ່ງ, ເພາະຄວາມຊົ່ວຮ້າຍຂອງເຈົ້າ, ເຈົ້າຈຶ່ງ [ກ]ຂາຍຕົວຂອງເຈົ້າເອງ, ແລະ ເພາະການລ່ວງລະເມີດຂອງເຈົ້າ ແມ່ຂອງເຈົ້າຈຶ່ງຖືກໄລ່ອອກໄປ.

2 ດັ່ງນັ້ນ, ເວລາເຮົາມາບໍ່ມີຜູ້ໃດຢູ່; ເວລາເຮົາ [ກ]ເອີ້ນ, ແທ້ຈິງແລ້ວ, ບໍ່ມີຜູ້ໃດຂານຕອບ. ໂອ້ ເຊື້ອສາຍອິດສະຣາເອນເອີຍ ມືຂອງເຮົາສັ້ນໄປຈົນວ່າບໍ່ສາມາດຈະໄຖ່ບໍ? ຫລື ວ່າເຮົາບໍ່ມີອຳນາດທີ່ຈະປົດປ່ອຍພວກເຈົ້າບໍ? ຈົ່ງເບິ່ງ, ໂດຍການຕິຕຽນຂອງເຮົາ, ເຮົາຈຶ່ງເຮັດໃຫ້ [ຂ]ນ້ຳທະເລແຫ້ງລົງ, ແລະ ເຮົາເຮັດໃຫ້ [ຄ]ແມ່ນ້ຳເປັນຖິ່ນແຫ້ງແລ້ງກັນດານ ແລະ [ງ]ປາຂອງພວກເຂົາສົ່ງກິ່ນເໝັນເພາະວ່ານ້ຳແຫ້ງ ແລະ ມັນໄດ້ຕາຍເພາະຄວາມຂາດນ້ຳ.

3 ເຮົາຫົ່ມຟ້າສະຫວັນໄວ້ດ້ວຍ [ກ]ຄວາມມືດ ແລະ ເອົາ [ຂ]ຜ້າກະສອບມາຄຸມ.

4 ອົງພຣະຜູ້ເປັນເຈົ້າໄດ້ປະທານ [ກ]ລີ້ນຂອງນັກປາດໃຫ້ເຮົາ, ເພື່ອເຮົາຈະຮູ້ຈັກວ່າຈະເວົ້າແນວໃດໃຫ້ເໝາະສົມກັບພວກທ່ານ, ໂອ້ ເຊື້ອສາຍອິດສະຣາເອນເອີຍ. ເວລາພວກທ່ານອິດເມື່ອຍ ພຣະອົງໄດ້ປຸກພວກທ່ານລຸກທຸກໆເຊົ້າ. ພຣະອົງເຮັດໃຫ້ຫູຂອງເຮົາໄວເພື່ອຈະໄດ້ຍິນດີຄືນັກປາດ.

5 ອົງພຣະຜູ້ເປັນເຈົ້າໄດ້ເປີດ [ກ]ຫູຂອງເຮົາ, ແລະ ເຮົາບໍ່ໄດ້ກະບົດ, ທັງບໍ່ໄດ້ຫັນໜ້າໜີ.

6 ເຮົາຫັນຫລັງໃຫ້ [ກ]ຜູ້ຊ້ຽນຕີ ແລະ ຫັນແກ້ມຂອງເຮົາໃຫ້ຜູ້ທີ່ດຶງໜົມ. ແລະ ເຮົາບໍ່ໄດ້ເຊື່ອງໜ້າຈາກຄວາມອັບອາຍ ແລະ ການຖົ່ມນ້ຳລາຍໃສ່.

7 ເພາະອົງພຣະຜູ້ເປັນເຈົ້າຈະຊ່ວຍເຮົາ, ສະນັ້ນເຮົາຈະບໍ່ຍອມຈຳນົນ. ດັ່ງນັ້ນ ເຮົາໄດ້ເຮັດໜ້າຂອງເຮົາຄືຫີນເຫລັກໄຟ, ແລະ ເຮົາຮູ້ວ່າເຮົາຈະບໍ່ອາຍ.

8 ແລະ ພຣະຜູ້ເປັນເຈົ້າຢູ່ໃກ້, ແລະ ພຣະອົງຮັບຮອງເຮົາ. ແມ່ນໃຜຈະຕໍ່ສູ້ກັບເຮົາ? ກໍໃຫ້ພວກເຮົາຢືນຢູ່ດ້ວຍກັນ. ແມ່ນໃຜຈະເປັນຜູ້ປໍລະປັກຂອງເຮົາ? ກໍໃຫ້ເຂົາເຂົ້າມາໃກ້ເຮົາ ແລະ ເຮົາຈະຊ້ຽນຕີເຂົາດ້ວຍພະລັງປາກຂອງເຮົາ.

9 ແລະ ອົງພຣະຜູ້ເປັນເຈົ້າຈະຊ່ວຍເຮົາ. ແລະ ຜູ້ໃດທີ່ຈະ [ກ]ກ່າວໂທດເຮົານັ້ນ, ຈົ່ງເບິ່ງເຂົາຈະເກົ່າຄືກັນກັບເສື້ອຜ້າ, ແລະ ຕົວແມງຈະກັດກິນມັນຈົນໝົດ.

10 ມີຜູ້ໃດໃນບັນດາພວກເຈົ້າທີ່ຢ້ານກົວ

---

**7** 1 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
2 *ກ* ສພສ 1:24–25; ອຊຢ 65:12; ແອວ 5:37.
*ຂ* ອພຍ 14:21; ພສສ 106:9; ຄພ 133:68–69.
*ຄ* ຢຊ 3:15–16.
*ງ* ອພຍ 7:21.
3 *ກ* ອພຍ 10:21.
*ຂ* ພນມ 6:12.
4 *ກ* ລກ 2:46–47.
5 *ກ* ຄພ 58:1.
6 *ກ* ມທ 27:26; 2 ນຟ 9:5.
9 *ກ* ຣມ 8:31.

ພຣະຜູ້ເປັນເຈົ້າ, ແລະ ເຊື່ອຟັງ [ກ]ສຽງຂອງ
ຜູ້ຮັບໃຊ້ຂອງພຣະອົງ, ທີ່ດຳເນີນໃນຄວາມ
ມືດ ແລະ ບໍ່ມີຄວາມສະຫວ່າງ?
11 ຈົ່ງ ເບິ່ງ ເຈົ້າທັງຫລາຍ ຜູ້ກໍ່ໄຟ, ທີ່
ອ້ອມຮອບຕົວເຈົ້າດ້ວຍແສງໄຟ, ໄດ້ເດີນຢູ່
ໃນຄວາມສະຫວ່າງຂອງໄຟ [ກ]ຂອງເຈົ້າ ຊຶ່ງ
ເຈົ້າໄດ້ກໍ່. ເຈົ້າຈະໄດ້ຮັບຢ່າງນີ້ຈາກມືຂອງ
ເຮົາຄື—ເຈົ້າຈະຕ້ອງນອນລົງໃນຄວາມທໍ
ລະມານ.

## ບົດທີ 8

*ຢາໂຄບ ອ່ານ ຈາກໜັງສືເອຊາຢາຕໍ່: ໃນ ຍຸກສຸດທ້າຍ ພຣະຜູ້ເປັນເຈົ້າຈະປອບໃຈ ຊີໂອນ ແລະ ເຕົ້າໂຮມອິດສະຣາເອນ—ຜູ້ທີ່ຖືກໄຖ່ຈະມາຫາຊີໂອນ ໃນທ່າມກາງ ຄວາມປິຕິຍິນດີຢ່າງຍິ່ງ—ປຽບທຽບກັບ ເອຊາຢາ 51 ແລະ 52:1–2. ປະມານ 559–545 ປີ ກ່ອນ ຄ.ສ.*

1 ຈົ່ງເຊື່ອຟັງເຮົາ, ເຈົ້າທັງຫລາຍຜູ້ເດີນ
ທາງຕາມຄວາມຊອບທຳ. ຈົ່ງຫລຽວເບິ່ງ
[ກ]ຫີນທີ່ເຈົ້າຖືກສະກັດອອກມາ, ແລະ ຮູ
ຂອງຫລຸມບ່ອນເຈົ້າຖືກຂຸດອອກມາ.
2 ຈົ່ງເບິ່ງອັບຣາຮາມ, [ກ]ບັນພະບຸລຸດຂອງ
ເຈົ້າ, ແລະ [ຂ]ນາງຊາຣາຜູ້ໃຫ້ກຳເນີດເຈົ້າ;
ເພາະເຮົາເອີ້ນລາວຜູ້ດຽວ ແລະ ໃຫ້ພອນ
ແກ່ລາວ.
3 ແລະ ພຣະ ຜູ້ ເປັນ ເຈົ້າ ຈະ ປອບ ໃຈ
[ກ]ຊີໂອນ, ພຣະອົງຈະປອບໃຈບ່ອນວ່າງ
ເປົ່າທັງໝົດຂອງມັນ ແລະ ພຣະອົງຈະເຮັດ
ໃຫ້ [ຂ]ຖິ່ນແຫ້ງແລ້ງກັນດານຂອງມັນຄືສວນ
ເອເດນ, ແລະ ທະເລຊາຍຂອງມັນຄືກັນ
ກັບອຸດທະຍານຂອງພຣະຜູ້ເປັນເຈົ້າ. ໃນ
ບ່ອນນັ້ນຈະພົບຄວາມສຸກ ແລະ ຄວາມດີ
ໃຈຈາກການຂອບພຣະໄທພຣະເຈົ້າ.
4 ຈົ່ງເຊື່ອຟັງເຮົາ, ຜູ້ຄົນຂອງເຮົາເອີຍ;
ແລະ ງ່ຽງຫູຟັງເຮົາ, ໂອ້ ປະຊາຊາດຂອງ
ເຮົາເອີຍ; ເພາະ [ກ]ກົດຂໍ້ໜຶ່ງຈະອອກໄປ
ຈາກເຮົາ, ແລະ ເຮົາຈະເຮັດໃຫ້ຄຳພິພາກ
ສາຂອງເຮົາເປັນ [ຂ]ແສງສະຫວ່າງຂອງຊົນ
ຊາດທັງຫລາຍ.
5 ຄວາມຊອບທຳຂອງເຮົາຢູ່ໃກ້; [ກ]ຄວາມ
ລອດຂອງເຮົາໄດ້ອອກໄປແລ້ວ, ແລະ
ແຂນຂອງເຮົາຈະພິພາກສາຜູ້ຄົນທັງປວງ.
ຜູ້ຄົນ [ຂ]ຊາວເກາະຈະຄອຍຖ້າເຮົາ, ແລະ
ພວກເຂົາຈະໄວ້ໃຈໃນອ້ອມແຂນຂອງເຮົາ.
6 ຈົ່ງຫລຽວເບິ່ງຟ້າສະຫວັນ ແລະ ຫລຽວ
ເບິ່ງໂລກທາງລຸ່ມ; ເພາະ [ກ]ຟ້າສະຫວັນ
ຈະ [ຂ]ຫາຍໄປຄືກັນກັບຄວັນ ແລະ ໂລກ
ຈະ [ຄ]ເກົ່າລົງຄືກັນກັບເສື້ອຜ້າ; ແລະ ຄົນ
ທັງຫລາຍທີ່ຢູ່ໃນນັ້ນຈະຕາຍດ້ວຍວິທີດຽວ
ກັນ. ແຕ່ວ່າຄວາມລອດຂອງເຮົາຈະເປັນຢູ່
ຕະຫລອດໄປ, ແລະ ຄວາມຊອບທຳຂອງ
ເຮົາຈະບໍ່ລົ້ມເລີກໄປ.
7 ຈົ່ງເຊື່ອຟັງເຮົາ, ເຈົ້າທັງຫລາຍຜູ້ຮູ້ເຖິງ
ຄວາມຊອບທຳ, ຜູ້ຊຶ່ງເຮົາໄດ້ຂຽນກົດຂອງ
ເຮົາໄວ້ໃນໃຈຂອງເຂົາ, ເຈົ້າຢ່າ [ກ]ຢ້ານ
ກົວຄຳຕຳນິຂອງມະນຸດ ແລະ ຢ່າຢ້ານຄຳ
ປ້ອຍດ່າຂອງຄົນເຫລົ່ານັ້ນ.
8 ເພາະຕົວແມງຈະກິນພວກເຂົາໝົດຄື

10 *ກ* ຄພ 1:38.
11 *ກ* ຜປ 17:6.
**8** 1 *ກ* ຄມພ ຫີນ.
2 *ກ* ປຖກ 17:1–8; ຄພ 132:49.
*ຂ* ປຖກ 24:36.
3 *ກ* ຄມພ ຊີໂອນ.
*ຂ* ອຊຢ 35:1–2, 6–7.
4 *ກ* ພ ການສອນ, ຄຳສອນ. ອຊຢ 2:3. ຄມພ ພຣະກິດຕິຄຸນ.
*ຂ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງ ຂອງພຣະຄຣິດ.
5 *ກ* ຄມພ ລອດ, ຄວາມລອດ.
*ຂ* 2 ນຟ 10:20.
6 *ກ* 2 ປຕ 3:10.
*ຂ* ເຮັບເຣີ ຖືກແຍກອອກ. ພສສ 102:25–27.
*ຄ* ເຮັບເຣີ ເນົ່າເປື່ອຍ.
7 *ກ* ພສສ 56:4, 11; ຄພ 122:9.

ກັນກັບເສື້ອຜ້າ, ແລະ ໜອນຈະເຈາະກິນ
ພວກເຂົາຄືກັນກັບຂົນແກະ. ແຕ່ວ່າຄວາມ
ຊອບທຳຂອງເຮົາຈະເປັນຢູ່ຕະຫລອດໄປ,
ແລະ ຄວາມລອດຂອງເຮົາຈະຢູ່ຈາກລຸ້ນສູ່
ລຸ້ນ.
9 ຕື່ນຖິດ! ຕື່ນເຖີດ! ຈົ່ງຮວບຮວມ [ກ]ພະ
ລັງ ຂອງເຈົ້າ, ໂອ້ ແຂນຂອງ ພຣະຜູ້ເປັນ
ເຈົ້າ; ຈົ່ງຕື່ນຄືກັນກັບໃນສະໄໝບູຮານ. ບໍ່
ແມ່ນພຣະອົງບໍທີ່ຕັດຣາຮາບເປັນຕ່ອນໆ
ແລະ ແທງມັງກອນທະລຸ?
10 ບໍ່ແມ່ນພຣະອົງບໍທີ່ເຮັດໃຫ້ນ້ຳທະເລ
ແຫ້ງ ແລະ ຄວາມເລິກທີ່ສຸດຂອງນ້ຳອັນ
ກວ້າງໃຫຍ່ແຫ້ງລົງ ທີ່ເຮັດໃຫ້ຄວາມເລິກ
ຂອງທະເລເປັນ [ກ]ຫົນທາງໃຫ້ຄົນຜູ້ທີ່ຖືກ
ໄຖ່ຜ່ານໄປ?
11 ສະນັ້ນ, [ກ]ຄົນທີ່ຖືກໄຖ່ໂດຍພຣະຜູ້
ເປັນເຈົ້າ ຈະກັບມາ ແລະ ມາພ້ອມກັບ
[ຂ]ການຮ້ອງເພງສູ່ຊີໂອນ ແລະ ຄວາມສຸກ
ແລະ ຄວາມບໍລິສຸດອັນເປັນນິດຈະຢູ່ເທິງ
ຫົວຂອງພວກເຂົາ; ແລະ ພວກເຂົາຈະ
ໄດ້ຮັບຄວາມປິຕິຍິນດີ ແລະ ຄວາມສຸກ;
ຄວາມເສົ້າສະຫລົດໃຈ ແລະ [ຄ]ຄວາມເປັນ
ທຸກຈະໜີໄປ.
12 [ກ]ເຮົາຄືຜູ້ນັ້ນ, ແທ້ຈິງແລ້ວເຮົາຄືຜູ້ທີ່
ປອບໂຍນເຈົ້າ. ຈົ່ງເບິ່ງ, ເຈົ້າແມ່ນໃຜຈຶ່ງ
ຈະ [ຂ]ຢ້ານມະນຸດຜູ້ຊຶ່ງຈະຕ້ອງຕາຍ, ແລະ
ຢ້ານລູກຂອງມະນຸດຜູ້ຊຶ່ງຈະຖືກເຮັດໃຫ້ຄື
ກັນກັບ [ຄ]ຕົ້ນຫຍ້າ?
13 ແລະ [ກ]ຫລົງລືມພຣະຜູ້ເປັນເຈົ້າ ພຣະ
ຜູ້ສ້າງຂອງເຈົ້າທີ່ໄດ້ຢຶດຟ້າສະຫວັນອອກ
ແລະ ວາງຮາກຖານຂອງແຜ່ນດິນໂລກ,
ແລະ ຢ້ານກົວຢູ່ເລື້ອຍໄປຕະຫລອດວັນ,
ເພາະຄວາມໂມໂຫຂອງຜູ້ກົດຂີ່ຄືກັບວ່າ
ເຂົາຈະມາທຳຮ້າຍຊັ້ນບໍ? ແລະ ຄວາມໂມ
ໂຫຂອງຜູ້ກົດຂີ່ນັ້ນຢູ່ໃສ?
14 ຊະເລີຍຜູ້ທີ່ຖືກກັກຂັງຈະໄດ້ຮັບການ
ປົດປ່ອຍໂດຍໄວ, ແລະ ເຂົາຈະບໍ່ຕາຍຢູ່
ໃນຫລຸມ ທັງອາຫານຂອງເຂົາຈະບໍ່ຂາດ.
15 ເພາະເຮົາຄືພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງເຈົ້າ, ຜູ້ກວນທະເລ ແລະ
[ກ]ຄື້ນໃຫ້ຫວັ່ນໄຫວ; ຈອມໂຍທາຄືຊື່ຂອງ
ເຮົາ.
16 ແລະ ເຮົາໄດ້ໃສ່ຖ້ອຍຄຳຂອງເຮົາ
ໄວ້ໃນປາກຂອງເຈົ້າ ແລະ ປົດບັງເຈົ້າໄວ້
ໃນຮົ່ມມືຂອງເຮົາ ເພື່ອເຮົາຈະໄດ້ຕັ້ງຟ້າ
ສະຫວັນ ແລະ ວາງຮາກຖານຂອງໂລກ
ແລະ ກ່າວກັບຊີໂອນວ່າ: ຈົ່ງເບິ່ງ, ເຈົ້າເປັນ
[ກ]ຜູ້ຄົນຂອງເຮົາ.
17 ຕື່ນເຖີດ! ຕື່ນເຖີດ! ຈົ່ງຢືນຂຶ້ນ, ໂອ້
ເຢຣູຊາເລັມ, ຊຶ່ງໄດ້ດື່ມ [ກ]ຈອກແຫ່ງ [ຂ]ພຣະ
ພິໂລດຈາກພຣະຫັດຂອງພຣະຜູ້ເປັນ
ເຈົ້າ—ເຈົ້າໄດ້ດື່ມເງື່ອນທີ່ເຫລືອຈາກຈອກ
ແຫ່ງຄວາມສັ່ນສະເທືອນ—
18 ແລະ ໃນບັນດາລູກທັງໝົດທີ່ນາງ
ຄອດອອກມາ ບໍ່ມີໃຜຊີ້ນຳນາງເລີຍ ແລະ
ທັງໃນບັນດາລູກທັງໝົດທີ່ນາງໄດ້ລ້ຽງມາ
ບໍ່ມີໃຜຊ່ວຍນາງເລີຍ.
19 [ກ]ລູກສອງຄົນນີ້ຈະມາຫາເຈົ້າ ແມ່ນ
ໃຜຈະເສຍໃຈແທນເຈົ້າ—ຍ້ອນຄວາມເປົ່າ
ປ່ຽວ ແລະ ຄວາມພິນາດ, ແລະ ຄວາມອຶດ
ຢາກ ແລະ ສົງຄາມ—ແລະ ແມ່ນໃຜຈະ
ເປັນຜູ້ປອບໂຍນເຈົ້າ?

9 *ກ* ຄພ 113:7–8.
10 *ກ* ອຊຢ 35:8.
11 *ກ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຂ* ອຊຢ 35:10.
*ຄ* ພນມ 21:4.
12 *ກ* ຄພ 133:47; 136:22.
*ຂ* ຢມຢ 1:8.
*ຄ* ອຊຢ 40:6–8;
1 ປຕ 1:24.
13 *ກ* ຢມຢ 23:27.
15 *ກ* 1 ນຟ 4:2.
16 *ກ* 2 ນຟ 3:9; 29:14.
17 *ກ* ອຊຢ 29:9;
ຢມຢ 25:15.
*ຂ* ລກ 21:24.
19 *ກ* ພນມ 11:3.

20 ລູກຊາຍທັງຫລາຍຂອງເຈົ້າໄດ້ເປັນ
ລົມໄປ, ນອກຈາກສອງຄົນນີ້; ພວກເຂົາ
ນອນຢູ່ທີ່ຕົ້ນທາງທຸກສາຍ; ໃນຂະນະທີ່
ພວກເຂົາຄືກັນກັບງົວປ່າທີ່ຖືກຕາໜ່າງ
ຢູ່, ພວກເຂົາເຕັມໄປດ້ວຍຄວາມໂມໂຫ
ໃຫ້ພຣະຜູ້ເປັນເຈົ້າ, ແລະ ຕິຕຽນພຣະເຈົ້າ
ຂອງເຈົ້າ.
21 ສະນັ້ນ, ບັດນີ້, ຈົ່ງຟັງເລື່ອງນີ້, ເຈົ້າ
ໄດ້ເປັນທຸກ, ແລະ ໄດ້ [ກ]ມຶນເມົາ, ແລະ ບໍ່
ແມ່ນການມຶນເມົາຂອງເຫລົ້າອະງຸ່ນ:
22 ພຣະຜູ້ເປັນເຈົ້າກ່າວໄວ້ວ່າ ພຣະຜູ້
ເປັນເຈົ້າ ແລະ ພຣະເຈົ້າຂອງເຈົ້າໄດ້ [ກ]ວິງ
ວອນແທນຜູ້ຄົນຂອງພຣະອົງ; ຈົ່ງເບິ່ງ,
ເຮົາເອົາຈອກແຫ່ງຄວາມສັ່ນສະເທືອນ,
ແລະ ເງື່ອນໃນຖ້ວຍແຫ່ງພຣະພິໂລດຂອງ
ເຮົາອອກຈາກມືຂອງເຈົ້າແລ້ວ; ເພື່ອເຈົ້າ
ຈະບໍ່ດື່ມມັນອີກຕໍ່ໄປ.
23 ແຕ່ [ກ]ເຮົາຈະເອົາມັນໄວ້ໃນມືຂອງຄົນ
ທີ່ເຮັດໃຫ້ເຈົ້າເປັນທຸກ; ຄົນທີ່ເວົ້າກັບຈິດ
ວິນຍານຂອງເຈົ້າວ່າ: ກົ້ມຫົວລົງກາບໄຫວ້
ເພື່ອເຮົາຈະໄດ້ຍ່າງຜ່ານໄປ—ແລະ ເຈົ້າ
ໄດ້ວາງຕົວຂອງເຈົ້າຄືກັນກັບພື້ນດິນ ແລະ
ຄືກັນກັບຫົນທາງເພື່ອໃຫ້ເຂົາຜ່ານໄປ.
24 [ກ]ຕື່ນເຖີດ, ຕື່ນເຖີດ, ໂອ້ [ຂ]ຊີໂອນ, ຈົ່ງ
ສວມ [ຄ]ພະລັງຂອງເຈົ້າ; ໂອ້ ເຢຣູຊາເລັມ,
ນະຄອນສັກສິດ; ຈົ່ງສວມອາພອນທີ່ສວຍ
ງາມຂອງເຈົ້າ; ເພາະນັບແຕ່ນີ້ໄປຈະບໍ່ມີຜູ້
ໃດທີ່ສົກກະປົກ ແລະ ບໍ່ສະອາດເຂົ້າມາຫາ
ເຈົ້າ [ງ]ອີກຕໍ່ໄປ.
25 ຈົ່ງສັ່ນຂີ້ຝຸ່ນອອກຈາກຕົວຂອງເຈົ້າ;
ໂອ້ ເຢຣູຊາເລັມ; ຈົ່ງ [ກ]ລຸກຂຶ້ນ ແລະ ນັ່ງເທິງ
ບັນລັງເທີ້ນ, ໂອ້ ຍິງຊະເລີຍຊາວຊີໂອນ
ເອີຍ, ຈົ່ງປົດ [ຂ]ປອກຄໍຂອງເຈົ້າອອກ.

## ບົດທີ 9

*ຢາໂຄບອະທິບາຍວ່າ ຊາວຢິວຈະໄດ້ເຕົ້າໂຮມທົ່ວແຜ່ນດິນແຫ່ງຄຳສັນຍາຂອງພວກເຂົາ—ການຊົດໃຊ້ໄຖ່ມະນຸດຈາກການຕົກ—ຮ່າງກາຍຂອງຄົນຕາຍຈະອອກມາຈາກຫລຸມສົບ, ແລະ ວິນຍານຂອງພວກເຂົາຈະອອກມາຈາກນະລົກ ແລະ ຈາກທີ່ສຸຂະເສີມ—ພວກເຂົາຈະຖືກພິພາກສາ—ການຊົດໃຊ້ຊ່ວຍໃຫ້ລອດຈາກຄວາມຕາຍ, ຈາກນະລົກ, ມານຮ້າຍ, ແລະ ຄວາມທໍລະມານທີ່ບໍ່ມີວັນສິ້ນສຸດ—ຄົນທີ່ຊອບທຳຈະລອດຢູ່ໃນອານາຈັກຂອງພຣະເຈົ້າ—ການທຳໂທດສຳລັບບາບໄດ້ຕັ້ງຂຶ້ນ—ພຣະຜູ້ບໍລິສຸດຂອງອິດສະຣາເອນເປັນຜູ້ຮັກສາປະຕູ. ປະມານ 559–545 ປີກ່ອນ ຄ.ສ.*

1 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າໄດ້ອ່ານເລື່ອງເຫລົ່າ
ນີ້ ເພື່ອທ່ານຈະຮູ້ກ່ຽວກັບ [ກ]ພັນທະສັນຍາ
ຂອງພຣະຜູ້ເປັນເຈົ້າ ທີ່ພຣະອົງໄດ້ເຮັດໄວ້
ກັບເຊື້ອສາຍອິດສະຣາເອນທັງໝົດ—
2 ຊຶ່ງພຣະອົງຮັບສັ່ງໄວ້ກັບຊາວຢິວດ້ວຍ
ປາກຂອງສາດສະດາຜູ້ບໍລິສຸດຂອງພຣະ
ອົງ, ແມ່ນຕັ້ງແຕ່ຕົ້ນລົງມາຈາກລຸ້ນສູ່ລຸ້ນ,
ຈົນເວລານັ້ນມາເຖິງ ເມື່ອພວກເຂົາຈະຖືກ
[ກ]ນຳກັບຄືນສູ່ສາດສະໜາຈັກ ແລະ ຝູງອັນ
ແທ້ຈິງຂອງພຣະເຈົ້າ; ເມື່ອພວກເຂົາຈະ

21 *ກ* 2 ນຟ 27:4.
22 *ກ* ຢມຍ 50:34.
23 *ກ* ຊກຢ 12:9.
24 *ກ* ອຊຢ 52:1–2.
*ຂ* ຄພ 113:7–8.
*ຄ* ຄມພ ຊີໂອນ.
*ງ* ຢອ 3:17.
25 *ກ* ອສ ລຸກຂຶ້ນຈາກຝຸ່ນດິນ ແລະ ນັ່ງລົງຢ່າງເປັນກຽດ, ໂດຍໄດ້ຮັບການໄຖ່ໃນທີ່ສຸດ.
*ຂ* ຄພ 113:9–10.
9 1 *ກ* ຄມພ ພັນທະສັນຍາຂອງອັບຣາຮາມ.
2 *ກ* 2 ນຟ 6:11. ຄມພ ການຟື້ນຟູພຣະກິດຕິຄຸນ.

ຖືກ [ຂ]ເຕົ້າໂຮມກັບບ້ານໄປຫາ [ຄ]ແຜ່ນດິນ
ຊຶ່ງເປັນມູນມໍລະດົກຂອງພວກເຂົາ, ແລະ
ຈະຖືກສະຖາປະນາຂຶ້ນໃນແຜ່ນດິນແຫ່ງ
ຄຳສັນຍາທັງໝົດຂອງພວກເຂົາ.
3 ຈົ່ງ ເບິ່ງ, ພີ່ ນ້ອງທີ່ຮັກ ແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າເວົ້າເລື່ອງ ເຫລົ່ານີ້
ກັບທ່ານ ເພື່ອທ່ານຈະໄດ້ປິຕິຍິນດີ, ແລະ
[ກ]ເງີຍຫົວຂອງທ່ານຂຶ້ນຕະຫລອດການ,
ເພາະພອນຊຶ່ງອົງພຣະຜູ້ເປັນເຈົ້າປະທານ
ໃຫ້ລູກຫລານຂອງທ່ານ.
4 ເພາະຂ້າພະເຈົ້າຮູ້ວ່າ ທ່ານຫລາຍຄົນ
ສະແຫວງຫາມາຫລາຍແລ້ວທີ່ຈະໄດ້ຮູ້ເຖິງ
ສິ່ງທີ່ຈະມາເຖິງ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຮູ້
ວ່າ ທ່ານຮູ້ກ່ຽວກັບເນື້ອໜັງຂອງພວກເຂົາ
ຕ້ອງສູນເສຍໄປ ແລະ ຕາຍ; ເຖິງຢ່າງໃດກໍ
ຕາມ, ໃນ [ກ]ຮ່າງກາຍຂອງພວກເຮົາ, ພວກ
ເຮົາຈະເຫັນພຣະເຈົ້າ.
5 ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າທ່ານຮູ້
ວ່າ ພຣະອົງຈະປະກົດຕົວກັບຄົນ ເຫລົ່າ
ນັ້ນທີ່ເຢຣູຊາເລັມ ຊຶ່ງພວກເຮົາໄດ້ຈາກ
ມາ; ເພາະສົມຄວນທີ່ເລື່ອງນີ້ຈະເປັນໄປ
ໃນບັນດາພວກເຂົາ; ເພາະ [ກ]ພຣະຜູ້ສ້າງ
ຜູ້ຍິ່ງໃຫຍ່ ເຫັນຄວາມຈຳເປັນທີ່ຈະຍອມ
ໃຫ້ພຣະອົງມາຂຶ້ນຢູ່ກັບມະນຸດໃນເນື້ອໜັງ
ແລະ ສິ້ນພຣະຊົນເພື່ອມະນຸດທຸກຄົນ ເພື່ອ
ມະນຸດ [ຂ]ທັງປວງຈະໄດ້ມາຂຶ້ນຢູ່ກັບພຣະ
ອົງ.
6 ເພາະເນື່ອງຈາກວ່າ ຄວາມຕາຍຜ່ານ
ມາຫາມະນຸດທັງປວງ ເພື່ອໃຫ້ [ກ]ແຜນທີ່
ເຕັມໄປດ້ວຍຄວາມເມດຕາຂອງພຣະ
ຜູ້ສ້າງ ຜູ້ຍິ່ງໃຫຍ່ສຳເລັດ ຈຶ່ງຈຳຕ້ອງມີ
ອຳນາດແຫ່ງ [ຂ]ການຟື້ນຄືນຊີວິດ; ແລະ
ການຟື້ນຄືນຊີວິດຈະຕ້ອງມາຫາມະນຸດ
ໂດຍເຫດຂອງ [ຄ]ການຕົກ; ແລະ ການຕົກ
ມາເຖິງໂດຍເຫດຂອງການລ່ວງລະເມີດ
ແລະ ເພາະມະນຸດກັບເປັນຄົນຕົກ ຈຶ່ງຖືກ
[ງ]ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນ
ເຈົ້າ.
7 ດັ່ງນັ້ນ, ຈຶ່ງຈຳຕ້ອງມີ [ກ]ການຊົດໃຊ້ອັນ
[ຂ]ບໍ່ມີຂອບເຂດ—ນອກຈາກຈະເປັນການ
ຊົດໃຊ້ອັນບໍ່ມີຂອບເຂດແລ້ວ, ຄວາມເນົ່າ
ເປື່ອຍນີ້ ຈະສວມໃສ່ຄວາມບໍ່ເນົ່າເປື່ອຍບໍ່
ໄດ້. ດັ່ງນັ້ນ, ການພິພາກສາຄັ້ງ [ຄ]ທຳອິດ
ຊຶ່ງມາຫາມະນຸດແລ້ວ ຈຶ່ງຈຳເປັນຕ້ອງ [ງ]ຢູ່ຕໍ່
ໄປເປັນເວລາບໍ່ມີຂອບເຂດ. ແລະ ຖ້າຫາກ
ເປັນດັ່ງນັ້ນ, ເນື້ອໜັງນີ້ຕ້ອງນອນລົງເພື່ອ
ຄວາມເນົ່າເປື່ອຍ ແລະ ເພື່ອສະຫລາຍຕົວ
ຢູ່ກັບດິນທີ່ໃຫ້ກຳເນີດມັນ ຈະບໍ່ລຸກຂຶ້ນອີກ
ຕໍ່ໄປ.
8 ໂອ້ [ກ]ຄວາມສະຫລຽວສະຫລາດຂອງ
ພຣະເຈົ້າ, [ຂ]ພຣະເມດຕາ ແລະ [ຄ]ພຣະ
ຄຸນຂອງພຣະອົງ! ເພາະຈົ່ງເບິ່ງ, ຖ້າຫາກ
[ງ]ເນື້ອໜັງຈະບໍ່ລຸກຂຶ້ນອີກຕໍ່ໄປ ວິນຍານ
ຂອງພວກເຮົາຍ່ອມຕ້ອງມາຂຶ້ນຢູ່ກັບທູດຜູ້

---

2 *ຂ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຄ* 2 ນຟ 10:7–8. ຄມພ ແຜ່ນດິນແຫ່ງຄຳສັນຍາ.
3 *ກ* ປຈສ ພສສ 24:7–10 (ພາກທ້ອຍທ້າຍ).
4 *ກ* ໂຢບ 19:26; ແອວ 11:41–45; 42:23; ຣວມ 14:15; ມມ 9:13.
5 *ກ* ຄມພ ສ້າງ, ການສ້າງ.
*ຂ* ຢຮ 12:32; 2 ນຟ 26:24; 3 ນຟ 27:14–15.
6 *ກ* ຄມພ ແຜນແຫ່ງການໄຖ່.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຄ* ຄມພ ການຕົກຂອງອາດາມ ແລະ ເອວາ.
*ງ* 2 ນຟ 2:5.
7 *ກ* ຄມພ ຊົດໃຊ້, ການຊົດໃຊ້.
*ຂ* ແອວ 34:10.
*ຄ* ມຊຢ 16:4–5; ແອວ 42:6, 9, 14.
*ງ* ມຊຢ 15:19.
8 *ກ* ໂຢບ 12:13; ອຣຮ 3:21. ຄມພ ສະຕິປັນຍາ.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
*ຄ* ຄມພ ພຣະຄຸນ.
*ງ* ຄພ 93:33–34.

ນັ້ນ ຊຶ່ງ [ຈ]ຕົກຈາກທີ່ປະທັບຂອງພຣະເຈົ້າຜູ້
ສະຖິດນິລັນດອນ, ແລະ ກັບເປັນ [ສ]ມານບໍ່
ລຸກຂຶ້ນອີກຕໍ່ໄປ.
9 ແລະ ວິນຍານຂອງພວກເຮົາຕ້ອງກັບ
ເປັນ ຄືກັນກັບ ມັນ, ແລະ ພວກເຮົາຕ້ອງ
ກາຍເປັນມານ, ເປັນ [ກ]ບໍລິວານຂອງມານ,
ທີ່ຈະຖືກ [ຂ]ກີດກັນໄວ້ຈາກທີ່ປະທັບຂອງ
ພຣະເຈົ້າຂອງພວກເຮົາ ແລະ ຈະຄົງຢູ່
ກັບບິດາແຫ່ງ [ຄ]ຄວາມຂີ້ຕົວະ ໃນຄວາມ
ທໍລະມານຄືກັນກັບຕົວຂອງມັນ; ແທ້ຈິງ
ແລ້ວ, ສຳລັບຄົນນັ້ນ ຜູ້ [ງ]ຫລອກລວງບິດາ
ມານດາຜູ້ທຳອິດຂອງພວກເຂົາ, ຜູ້ [ຈ]ແປງ
ຕົວເກືອບຄືກັນກັບ [ສ]ທູດແຫ່ງຄວາມສະ
ຫວ່າງ ແລະ ຍຸຍົງໃຫ້ລູກຫລານມະນຸດເຮັດ
[ຊ]ການມົ້ວສຸມລັບແຫ່ງການຄາດຕະກອນ
ແລະ ວຽກງານລັບແຫ່ງຄວາມມືດທຸກຢ່າງ.
10 ໂອ້ ພຣະກະລຸນາທິຄຸນຂອງພຣະ
ເຈົ້າຂອງພວກເຮົາຍິ່ງໃຫຍ່ພຽງໃດ ຜູ້ໄດ້
ຕຽມທາງເພື່ອການໜີຂອງພວກເຮົາ ໃຫ້
ພົ້ນຈາກເງື້ອມມືຂອງມານຮ້າຍທີ່ເປັນຕາ
ຢ້ານຜູ້ນັ້ນ; ແທ້ຈິງແລ້ວ, ມານຮ້າຍຜູ້ນັ້ນ
ແມ່ນ [ກ]ຄວາມຕາຍ ແລະ [ຂ]ນະລົກ ຊຶ່ງຂ້າ
ພະເຈົ້າເອີ້ນວ່າ ຄວາມຕາຍທາງຮ່າງກາຍ
ແລະ ຄວາມຕາຍທາງວິນຍານນຳອີກ.
11 ແລະ ເພາະທາງແຫ່ງ [ກ]ການປົດປ່ອຍ
ຂອງພຣະເຈົ້າຂອງພວກເຮົາ, ພຣະຜູ້ບໍລິ
ສຸດຂອງອິດສະຣາເອນ, [ຂ]ຄວາມຕາຍນີ້,
ຊຶ່ງຂ້າພະເຈົ້າເວົ້າໄວ້ທີ່ເປັນຄວາມຕາຍ
ທາງໂລກ ຈະປ່ອຍຄົນຕາຍຂອງມັນຂຶ້ນມາ
ຊຶ່ງຄວາມຕາຍນັ້ນຄືຫລຸມສົບ.
12 ແລະ [ກ]ຄວາມຕາຍນີ້ ຊຶ່ງຂ້າພະເຈົ້າ
ເວົ້າໄວ້ ຊຶ່ງເປັນຄວາມຕາຍທາງວິນຍານ
ຈະປ່ອຍຄົນຕາຍຂອງມັນຂຶ້ນມາ; ຊຶ່ງ
ຄວາມຕາຍທາງວິນຍານຄື [ຂ]ນະລົກ; ດັ່ງ
ນັ້ນ, ຄວາມຕາຍ ແລະ ນະລົກຕ້ອງປ່ອຍ
ຄົນຕາຍຂອງມັນຂຶ້ນມາ, ແລະ ນະລົກ
ຕ້ອງປ່ອຍວິນຍານທີ່ຖືກຈ່ອງຈຳຂອງມັນ
ຂຶ້ນມາ, ແລະ ຫລຸມສົບຕ້ອງປ່ອຍຮ່າງ
ກາຍທີ່ຖືກຈ່ອງຈຳຂອງມັນຂຶ້ນມາ, ແລະ
ຮ່າງກາຍກັບ [ຄ]ວິນຍານຂອງມະນຸດຈະຖືກ
[ງ]ນຳກັບຄືນຫາກັນ ແລະ ຈະເປັນໄປໂດຍ
ອຳນາດແຫ່ງການຟື້ນຄືນພຣະຊົນຂອງ
ພຣະຜູ້ບໍລິສຸດຂອງອິດສະຣາເອນ.
13 ໂອ້ [ກ]ແຜນຂອງພຣະເຈົ້າຂອງພວກ
ເຮົາຍິ່ງໃຫຍ່ພຽງໃດ! ເພາະອີກທາງໜຶ່ງ,
[ຂ]ທີ່ສຸຂະເສີມຂອງພຣະເຈົ້າຕ້ອງປ່ອຍວິນ
ຍານຂອງຄົນຊອບທຳຂຶ້ນມາ, ແລະ ຫລຸມ
ສົບປ່ອຍຮ່າງກາຍຂອງຄົນຊອບທຳຂຶ້ນ
ມາ, ແລະ ວິນຍານກັບຮ່າງກາຍຖືກ [ຄ]ນຳ
ກັບຄືນມາຫາຕົວຂອງມັນເອງອີກ, ແລະ
ມະນຸດທັງປວງກັບກາຍບໍ່ເນົ່າເປື່ອຍ ແລະ
ເປັນ [ງ]ອະມະຕະ, ແລະ ພວກເຂົາເປັນຈິດ
ວິນຍານທີ່ມີຊີວິດ ໂດຍມີ [ຈ]ຄວາມຮູ້ [ສ]ອັນ
ສົມບູນຄືກັນກັບພວກເຮົາໃນເນື້ອໜັງ,

---

8 ຈ ອຊຢ 14:12; 2 ນຟ 2:17–18; ມຊ 4:3–4; ອຣຣ 3:27–28.
ສ ຄມພ ມານ.
9 ກ ຢຄ 3:11; ແອວ 5:25, 39.
ຂ ພນມ 12:7–9.
ຄ ຄມພ ຕົວະ.
ງ ປຖກ 3:1–13; ມຊຢ 16:3; ມຊ 4:5–19.
ຈ 2 ກຣທ 11:14; ແອວ 30:53.
ສ ຄພ 129:8.
ຊ ຄມພ ການມົ້ວສຸມລັບ.
10 ກ ມຊຢ 16:7–8; ແອວ 42:6–15.
ຂ ຄມພ ນະລົກ.
11 ກ ຄມພ ພຣະຜູ້ປົດປ່ອຍ.
ຂ ຄມພ ຄວາມຕາຍທາງຮ່າງກາຍ.
12 ກ ຄມພ ຄວາມຕາຍທາງວິນຍານ.
ຂ ຄພ 76:81–85.
ຄ ຄມພ ວິນຍານ.
ງ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
13 ກ ຄມພ ແຜນແຫ່ງການໄຖ່.
ຂ ຄພ 138:14–19. ຄມພ ທີ່ສຸຂະເສີມ.
ຄ ແອວ 11:43.
ງ ຄມພ ອະມະຕະ, ຄວາມເປັນອະມະຕະ.
ຈ ຄພ 130:18–19.
ສ ຄມພ ດີພ້ອມທຸກຢ່າງ.

ນອກ ຈາກ ຄວາມ ຮູ້ ຂອງ ພວກ ເຮົາ ຈະ ສົມ
ບູນ.
14 ດັ່ງນັ້ນ, ພວກເຮົາຈະມີ [ກ]ຄວາມຮູ້ອັນ
ສົມບູນກ່ຽວກັບ [ຂ]ຄວາມຜິດທັງໝົດຂອງ
ພວກເຮົາ ແລະ ຄວາມເປິເປື້ອນຂອງພວກ
ເຮົາ, ແລະ [ຄ]ຄວາມເປືອຍເປົ່າຂອງພວກ
ເຮົາ, ແລະ ຄົນຊອບທຳຈະມີຄວາມຮູ້ອັນ
ສົມບູນກ່ຽວກັບຄວາມສຸກຂອງພວກເຂົາ
ແລະ [ງ]ຄວາມຊອບທຳຂອງພວກເຂົາໂດຍ
ທີ່ຖືກ [ຈ]ຫຸ້ມຫໍ່ໄວ້ດ້ວຍ [ສ]ຄວາມບໍລິສຸດ, ແທ້
ຈິງແລ້ວ, ແມ່ນດ້ວຍ [ຊ]ເສື້ອຄຸມແຫ່ງຄວາມ
ຊອບທຳ.
15 ແລະ ເຫດການຈະບັງເກີດຂຶ້ນຄື ເມື່ອ
ຄົນທັງປວງຈະຜ່ານຈາກຄວາມຕາຍຄັ້ງທຳ
ອິດມາສູ່ຊີວິດ, ເຖິງຂະໜາດທີ່ພວກເຂົາ
ກັບເປັນອະມະຕະ, ພວກເຂົາຕ້ອງປະກົດ
ຢູ່ຕໍ່ໜ້າ [ກ]ບັນລັງພິພາກສາຂອງພຣະຜູ້ບໍ
ລິສຸດຂອງອິດສະຣາເອນ; ແລະ ເມື່ອນັ້ນ
[ຂ]ການພິພາກສາຍ່ອມມາເຖິງ, ແລະ ເມື່ອ
ນັ້ນພວກເຂົາຕ້ອງຖືກພິພາກສາຕາມການ
ພິພາກສາອັນສັກສິດຂອງພຣະເຈົ້າ.
16 ແລະ ຢ່າງແນ່ນອນທີ່ສຸດ, ຕາບໃດ
ທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່, ເພາະອົງ
ພຣະຜູ້ເປັນເຈົ້າໄດ້ຮັບສັ່ງເລື່ອງນີ້ໄວ້, ແລະ
ເປັນ [ກ]ພຣະຄຳອັນນິລັນດອນຂອງພຣະອົງ
ຊຶ່ງຈະ [ຂ]ຜ່ານໄປບໍ່ໄດ້ ຄືຜູ້ທີ່ຊອບທຳຈະ
ຍັງຊອບທຳຢູ່ ແລະ ຜູ້ທີ່ [ຄ]ສົກກະປົກຈະ
ຍັງ [ງ]ສົກກະປົກຢູ່; ດັ່ງນັ້ນ, ຜູ້ທີ່ສົກກະປົກ
ຄື [ຈ]ມານ ແລະ ບໍລິວານຂອງມັນ; ແລະ ມັນ
ຈະອອກໄປຫາໄຟ [ສ]ອັນເປັນນິດ ຊຶ່ງຕຽມ
ໄວ້ສຳລັບມັນ ແລະ ຄວາມທໍລະມານຂອງ
ມັນເປັນຄື [ຊ]ທະເລໄຟ ແລະ ມາດ, ຊຶ່ງແປວ
ໄຟນັ້ນລຸກຢູ່ຕະຫລອດໄປບໍ່ມີວັນສິ້ນສຸດ.
17 ໂອ້ ຄວາມຍິ່ງໃຫຍ່ ແລະ [ກ]ຄວາມຍຸດ
ຕິທຳຂອງພຣະເຈົ້າຂອງພວກເຮົາ! ເພາະ
ພຣະອົງໄດ້ປະຕິບັດຕາມພຣະຄຳຂອງ
ພຣະອົງທັງໝົດ ແລະ ພຣະຄຳທີ່ອອກຈາກ
ພຣະໂອດແລ້ວ, ແລະ ກົດຂອງພຣະອົງ
ຕ້ອງສຳເລັດ.
18 ແຕ່, ຈົ່ງເບິ່ງ, ຄົນຊອບທຳ, [ກ]ໄພ່ພົນ
ຂອງພຣະຜູ້ບໍລິສຸດຂອງອິດສະຣາເອນ,
ຄົນທີ່ເຊື່ອແລ້ວໃນ ພຣະຜູ້ບໍລິສຸດຂອງ
ອິດສະຣາເອນ, ຄົນທີ່ອົດທົນຕໍ່ [ຂ]ກາງແຂນ
ຂອງໂລກມາແລ້ວ, ແລະ ກຽດຊັງຄວາມ
ອັບອາຍຂອງມັນ, ພວກເຂົາຈະໄດ້ຮັບ [ຄ]ອາ
ນາຈັກຂອງພຣະເຈົ້າມາເປັນ [ງ]ມູນມໍລະດົກ
ຊຶ່ງມີຕຽມໄວ້ສຳລັບພວກເຂົາ [ຈ]ຕັ້ງແຕ່ການ
ວາງຮາກຖານຂອງໂລກ, ແລະ ຄວາມສຸກ
ຂອງພວກເຂົາຈະບໍລິບູນ [ສ]ຕະຫລອດໄປ.
19 ໂອ້ ຄວາມຍິ່ງໃຫຍ່ແຫ່ງພຣະເມດ
ຕາຂອງພຣະເຈົ້າຂອງພວກເຮົາ, ພຣະຜູ້ບໍ
ລິສຸດຂອງອິດສະຣາເອນ! ເພາະພຣະອົງ

---

14 *ກ* ມຊຢ 3:25; ແອວ 5:18.
*ຂ* ຄມພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
*ຄ* ມມ 9:5.
*ງ* ຄມພ ຊອບທຳ, ຄວາມຊອບທຳ.
*ຈ* ສພສ 31:25.
*ສ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຊ* ຄພ 109:76.
15 *ກ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຂ* ພສສ 19:9; 2 ນຟ 30:9.
16 *ກ* 1 ກສ 8:56; ຄພ 1:38; ມຊ 1:4.
*ຂ* ຄພ 56:11.
*ຄ* ຄມພ ສົກກະປົກ, ຄວາມສົກກະປົກ.
*ງ* 1 ນຟ 15:33–35; ແອວ 7:21; ມມ 9:14; ຄພ 88:35.
*ຈ* ຄມພ ມານ.
*ສ* ມຊຢ 27:28.
*ຊ* ພນມ 21:8; 2 ນຟ 28:23; ຄພ 63:17.
17 *ກ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
18 *ກ* ຄມພ ໄພ່ພົນຂອງພຣະເຈົ້າ.
*ຂ* ລກ 14:27.
*ຄ* ຄມພ ສູງສົ່ງ, ຄວາມສູງສົ່ງ.
*ງ* ຄພ 45:58; 84:38.
*ຈ* ແອວ 13:3.
*ສ* ຄມພ ຊີວິດນິລັນດອນ.

ໄດ້ [ກ]ປົດປ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນ
ຈາກມານຮ້າຍທີ່ [ຂ]ເປັນຕາຢ້ານຜູ້ນັ້ນ ແລະ
ຄວາມຕາຍ ແລະ [ຄ]ນະລົກ, ແລະ ທະເລໄຟ
ແລະ ມາດແຫ່ງນັ້ນ, ຊຶ່ງເປັນຄວາມທໍລະ
ມານທີ່ບໍ່ມີວັນສິ້ນສຸດ.
20 ໂອ້ [ກ]ຄວາມສັກສິດຂອງພຣະເຈົ້າ
ຂອງພວກເຮົາຍິ່ງໃຫຍ່ພຽງໃດ! ເພາະພຣະ
ອົງ [ຂ]ຮູ້ທຸກໆເລື່ອງ, ແລະ ບໍ່ມີເລື່ອງໃດທີ່
ພຣະອົງບໍ່ຮູ້.
21 ແລະ ພຣະອົງໄດ້ສະເດັດມາຍັງໂລກ
ເພື່ອຈະໄດ້ [ກ]ຊ່ວຍມະນຸດທັງປວງໃຫ້ລອດ
ພົ້ນ ຖ້າຫາກເຂົາຈະເຊື່ອຟັງສຸລະສຽງຂອງ
ພຣະອົງ; ເພາະຈົ່ງເບິ່ງ, ພຣະອົງໄດ້ທົນຮັບ
ຄວາມເຈັບປວດຂອງມະນຸດທັງປວງ, ແທ້
ຈິງແລ້ວ, [ຂ]ຄວາມເຈັບປວດຂອງສິ່ງທີ່ມີຊີ
ວິດທີ່ຖືກສ້າງຂຶ້ນທຸກຢ່າງທັງຊາຍຍິງ ແລະ
ເດັກນ້ອຍທີ່ເປັນຄອບຄົວຂອງ [ຄ]ອາດາມ.
22 ແລະ ພຣະອົງໄດ້ທົນຮັບສິ່ງນີ້ ເພາະ
ການຟື້ນຄືນຊີວິດຈະໄດ້ເກີດກັບມະນຸດ
ທຸກຄົນ ເພື່ອຄົນທັງປວງຈະໄດ້ຢືນຢູ່ຕໍ່
ພຣະພັກຂອງພຣະອົງໃນວັນຍິ່ງໃຫຍ່ ແລະ
ວັນພິພາກສາ.
23 ແລະ ພຣະອົງໄດ້ບັນຊາຄົນທັງປວງ
ວ່າ ພວກເຂົາຕ້ອງ [ກ]ກັບໃຈ ແລະ ຮັບ
[ຂ]ບັບຕິສະມາໃນພຣະນາມຂອງພຣະອົງ,
ໂດຍມີສັດທາທີ່ສົມບູນໃນພຣະຜູ້ບໍລິສຸດ
ຂອງອິດສະຣາເອນ, ຖ້າບໍ່ດັ່ງນັ້ນ ພວກເຂົາ
ຈະລອດບໍ່ໄດ້ໃນອານາຈັກຂອງພຣະເຈົ້າ.
24 ແລະ ຖ້າຫາກພວກເຂົາບໍ່ກັບໃຈ
ແລະ ເຊື່ອໃນ [ກ]ພຣະນາມຂອງພຣະອົງ
ແລະ ຮັບບັບຕິສະມາໃນພຣະນາມຂອງ
ພຣະອົງ ແລະ [ຂ]ອົດທົນຈົນເຖິງທີ່ສຸດແລ້ວ
ພວກເຂົາຕ້ອງ [ຄ]ອັບປະໂຫຍດເພາະອົງ
ພຣະຜູ້ເປັນເຈົ້າພຣະຜູ້ບໍລິສຸດຂອງອິດສະ
ຣາເອນໄດ້ຮັບສັ່ງໄວ້.
25 ດັ່ງນັ້ນ, ພຣະອົງຈຶ່ງປະທານ [ກ]ກົດ
ໃຫ້ ແລະ ບ່ອນໃດ [ຂ]ບໍ່ມີກົດໄວ້ໃຫ້ຍ່ອມບໍ່ມີ
ໂທດ ແລະ ບ່ອນໃດບໍ່ມີໂທດຍ່ອມບໍ່ມີການ
ກ່າວໂທດ, ແລະ ບ່ອນໃດບໍ່ມີການກ່າວ
ໂທດ ພຣະເມດຕາຂອງພຣະຜູ້ບໍລິສຸດຂອງ
ອິດສະຣາເອນຍ່ອມມີສິດກັບພວກເຂົາ,
ເພາະການຊົດໃຊ້, ເພາະພວກເຂົາຖືກປົດ
ປ່ອຍດ້ວຍອຳນາດຂອງພຣະອົງ.
26 ເພາະ [ກ]ການຊົດໃຊ້ເປັນການພຽງພໍ
ກັບຂໍ້ຮຽກຮ້ອງຂອງ [ຂ]ຄວາມຍຸດຕິທຳຂອງ
ພຣະອົງທີ່ມີກັບຄົນທັງປວງຜູ້ບໍ່ [ຄ]ມີ [ງ]ກົດໃຫ້
ໄວ້ ຈົນວ່າພວກເຂົາຖືກປົດປ່ອຍໃຫ້ພົ້ນ
ຈາກມານຮ້າຍທີ່ເປັນຕາຢ້ານຜູ້ນັ້ນ, ຄວາມ
ຕາຍ ແລະ ນະລົກ ແລະ ມານ, ແລະ ທະເລ
ໄຟ ແລະ ມາດ, ຊຶ່ງເປັນຄວາມທໍລະມານ
ທີ່ບໍ່ມີວັນສິ້ນສຸດ ແລະ ພວກເຂົາຈະຖືກ
ນຳກັບຄືນມາຫາພຣະເຈົ້າພຣະອົງຜູ້ນັ້ນ

19 ກ ຄພ 108:8.
ຂ 1 ນຟ 15:35.
ຄ ຄມພ ນະລົກ.
20 ກ ຄມພ ສັກສິດ, ຄວາມສັກສິດ.
ຂ ແອວ 26:35; ຄພ 38:2.
21 ກ ຄມພ ລອດ, ຄວາມລອດ.
ຂ ຄພ 18:11; 19:18.
ຄ ຄມພ ອາດາມ.
23 ກ ຄມພ ກັບໃຈ, ການກັບໃຈ.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
24 ກ ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
ຂ ຄມພ ອົດທົນ, ຄວາມອົດທົນ.
ຄ ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
25 ກ ຢກບ 4:17. ຄມພ ກົດ.
ຂ ຣມ 4:15; 2 ນຟ 2:13; ແອວ 42:12–24. ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
26 ກ 2 ນຟ 2:10; ແອວ 34:15–16. ຄມພ ຊົດໃຊ້, ການຊົດໃຊ້.
ຂ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
ຄ ມຊຢ 3:11.
ງ ມຊຢ 15:24; ຄພ 137:7.

ຜູ້ປະທານ [ຈ]ລົມຫາຍໃຈໃຫ້ພວກເຂົາ ຊຶ່ງ
ເປັນພຣະຜູ້ບໍລິສຸດຂອງອິດສະຣາເອນ.
27 ແຕ່ວິບັດແກ່ຜູ້ທີ່ມີ [ກ]ກົດໃຫ້ໄວ້, ແທ້
ຈິງແລ້ວ, ທີ່ມີພຣະບັນຍັດທັງໝົດຂອງ
ພຣະເຈົ້າ ຄືກັນກັບພວກເຮົາ ແລະ ທີ່ໄດ້
ລ່ວງລະເມີດນັ້ນ, ແລະ ທີ່ໄດ້ໃຊ້ວັນເວລາ
ແຫ່ງການທົດລອງຂອງເຂົາໄປລ້າໆ,
ເພາະສະພາບຂອງເຂົາອັນເປັນຕາຢ້ານ!
28 ໂອ້ [ກ]ແຜນທີ່ມີເລ່ຫລ່ຽມຂອງມານ
ຮ້າຍນັ້ນ! ໂອ້ [ຂ]ຄວາມຖືຕົວ ແລະ ຄວາມ
ອ່ອນແອ ແລະ ຄວາມໂງ່ຂອງມະນຸດ!
ເມື່ອເຂົາ [ຄ]ມີການສຶກສາ ແລະ ຄິດວ່າຕົນ
[ງ]ສະຫລຽວສະຫລາດ, ແລະ ເຂົາບໍ່ເຊື່ອ
ຟັງ [ຈ]ຄຳແນະນຳຂອງພຣະເຈົ້າ ເພາະເຂົາ
ບໍ່ຮັບໂດຍຄິດວ່າເຂົາຮູ້ດ້ວຍຕົນເອງ, ດັ່ງ
ນັ້ນປັນຍາຂອງເຂົາຄືຄວາມໂງ່ ແລະ ບໍ່ມີ
ປະໂຫຍດສຳລັບເຂົາ. ແລະ ເຂົາຈະຕ້ອງ
ຕາຍ.
29 ແຕ່ມີການສຶກສາເປັນສິ່ງດີ ຖ້າຫາກ
ເຂົາ [ກ]ຍອມເຊື່ອຟັງ [ຂ]ຄຳແນະນຳຂອງພຣະ
ເຈົ້າ.
30 ແຕ່ວິບັດແກ່ [ກ]ຄົນຮັ່ງມີ, ທີ່ຮັ່ງມີດ້ວຍ
ສິ່ງຂອງຂອງໂລກ. ເພາະວ່າເຂົາຮັ່ງມີ ເຂົາ
ຈຶ່ງດູຖູກ [ຂ]ຄົນທຸກຍາກ, ແລະ ເຂົາຂົ່ມເຫັງ
ຄົນອ່ອນໂຍນ, ແລະ ໃຈຂອງເຂົາຢູ່ກັບຊັບ
ສົມບັດຂອງເຂົາ; ດັ່ງນັ້ນ, ຊັບສົມບັດຂອງ
ເຂົາຈຶ່ງເປັນພຣະເຈົ້າຂອງເຂົາ. ແລະ ຈົ່ງ
ເບິ່ງ, ຊັບສົມບັດຂອງເຂົາຈະຖືກທຳລາຍ
ພ້ອມກັບເຂົາຄືກັນ.
31 ແລະ ວິບັດແກ່ຄົນຫູໜວກທີ່ຈະບໍ່
[ກ]ຟັງ; ເພາະເຂົາຈະຕ້ອງຕາຍ.
32 ວິບັດແກ່ຄົນຕາບອດທີ່ຈະບໍ່ເບິ່ງ;
ເພາະເຂົາຈະຕ້ອງຕາຍຄືກັນ.
33 ວິບັດແກ່ໃຈທີ່ສົກກະປົກ, ເພາະ
ຄວາມຮູ້ເລື່ອງຄວາມຊົ່ວຮ້າຍຂອງເຂົາຈະ
ລົງໂທດເຂົາໃນວັນສຸດທ້າຍ.
34 ວິບັດແກ່ [ກ]ຄົນຂີ້ຕົວະ, ເພາະເຂົາຈະ
ຖືກໂຍນລົງ [ຂ]ນະລົກ.
35 ວິບັດແກ່ຄາດຕະກອນທີ່ [ກ]ຂ້າຄົນ
ໂດຍເຈດຕະນາ, ເພາະເຂົາຈະຕ້ອງ
[ຂ]ຕາຍ.
36 ວິບັດແກ່ຄົນທີ່ທຳ [ກ]ການໂສເພນີ,
ເພາະຈະຖືກໂຍນລົງນະລົກ.
37 ແທ້ຈິງແລ້ວ, ວິບັດແກ່ຄົນເຫລົ່ານັ້ນທີ່
[ກ]ນະມັດສະການຮູບບູຊາ, ເພາະມານຂອງ
ມານທັງປວງເບີກບານໃນການກະທຳຂອງ
ເຂົາ.
38 ແລະ, ໂດຍສະຫລຸບ, ວິບັດແກ່ຄົນ
ທັງປວງທີ່ຕາຍໃນບາບຂອງຕົນ, ເພາະ
ເຂົາຈະ [ກ]ກັບໄປຫາພຣະເຈົ້າ, ແລະ ເຫັນ
ພຣະພັກຂອງພຣະອົງ, ແລະ ຈະຄົງຢູ່ໃນ
ບາບຂອງເຂົາ.

---

26 *ຈ* ປຖກ 2:7;
ຄພ 93:33;
ອຣຣ 5:7.
27 *ກ* ລກ 12:47–48.
28 *ກ* ແອວ 28:13.
*ຂ* ຄມພ ອວດອົ່ງ,
ຄວາມອວດອົ່ງ.
*ຄ* ລກ 16:15;
2 ນຟ 26:20; 28:4, 15.
*ງ* ສພສ 14:6;
ຢມຢ 8:8–9;
ຣມ 1:22.
ຄມພ ຈອງຫອງ, ຄວາມ
ຈອງຫອງ;
ສະຕິປັນຍາ.
*ຈ* ແອວ 37:12.
ຄມພ ຄຳແນະນຳ.
29 *ກ* 2 ນຟ 28:26.
*ຂ* ຢຄ 4:10.
30 *ກ* ລກ 12:34;
1 ຕມທ 6:10;
ຄພ 56:16.
*ຂ* ຄມພ ຍາກຈົນ.
31 *ກ* ອຊກ 33:30–33;
ມທ 11:15;
ມຊຢ 26:28;
ຄພ 1:2, 11, 14;
ມຊ 6:27.
34 *ກ* ສພສ 19:9.
ຄມພ ຊື່ສັດ, ຄວາມຊື່ສັດ;
ຕົວະ.
*ຂ* ຄມພ ນະລົກ.
35 *ກ* ອພຍ 20:13;
ມຊຢ 13:21.
*ຂ* ຄມພ ໂທດປະຫານຊີວິດ.
36 *ກ* 3 ນຟ 12:27–29.
ຄມພ ພົມມະຈັນ.
37 *ກ* ຄມພ ການນັບຖືຮູບບູຊາ.
38 *ກ* ແອວ 40:11, 13.

39 ໂອ້, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຈົ່ງຈື່ຈຳ, ຄວາມເປັນຕາຢ້ານໃນ
ການລ່ວງລະເມີດຕໍ່ພຣະເຈົ້າຜູ້ບໍລິສຸດອົງ
ນັ້ນ, ແລະ ຄວາມເປັນຕາຢ້ານຂອງການ
ຜ່າຍແພ້ຕໍ່ການຊັກຈູງຂອງຄົນ [ກ]ເລ່ຫລ່ຽມ
ຜູ້ນັ້ນ, ຈົ່ງຈຳໄວ້ວ່າ ການມີ [ຂ]ຈິດໃຈທີ່ເຕັມ
ໄປດ້ວຍຕັນຫາຄື [ຄ]ຄວາມຕາຍ, ແລະ ການ
ມີຈິດໃຈທີ່ສະແຫວງຫາສິນທຳຄື [ງ]ຊີວິດ
[ຈ]ນິລັນດອນ.
40 ໂອ້ ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຈົ່ງງ່ຽງຫູຟັງຖ້ອຍຄຳຂອງຂ້າພະເຈົ້າ
ເຖີດ. ຈົ່ງຈື່ຈຳຄວາມຍິ່ງໃຫຍ່ຂອງພຣະຜູ້
ບໍລິສຸດຂອງອິດສະຣາເອນ. ຢ່າໄດ້ເວົ້າວ່າ
ຂ້າພະເຈົ້າເວົ້າເລື່ອງຮຸນແຮງຕໍ່ຕ້ານທ່ານ
ເພາະຖ້າຫາກທ່ານເວົ້າ, ທ່ານຈະໝິ່ນປະ
ໝາດ [ກ]ຄວາມຈິງ; ເພາະຂ້າພະເຈົ້າເວົ້າ
ພຣະຄຳຂອງພຣະຜູ້ສ້າງຂອງທ່ານ. ຂ້າ
ພະເຈົ້າຮູ້ວ່າຖ້ອຍຄຳແຫ່ງຄວາມຈິງເປັນ
[ຂ]ເລື່ອງຮຸນແຮງສຳລັບຄວາມເປິເປື້ອນທັງ
ສິ້ນ; ແຕ່ວ່າຄົນຊອບທຳບໍ່ຢ້ານກົວຄຳເວົ້າ
ເຫລົ່ານັ້ນ ເພາະພວກເຂົາຮັກຄວາມຈິງ
ແລະ ບໍ່ຫວັ່ນໄຫວ.
41 ໂອ້ ສະນັ້ນ, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຈົ່ງ [ກ]ມາຫາພຣະຜູ້ເປັນເຈົ້າ,
ພຣະຜູ້ບໍລິສຸດ. ຈົ່ງຈື່ຈຳວ່າ ທາງຂອງພຣະ
ອົງນັ້ນຊອບທຳ. ຈົ່ງເບິ່ງ, [ຂ]ທາງຂອງມະນຸດ
[ຄ]ແຄບ ແຕ່ວາງຢູ່ໃນເສັ້ນທາງຊື່ຕົງຕໍ່ໜ້າ
ເຂົາ, ແລະ ຜູ້ຮັກສາ [ງ]ປະຕູຄືພຣະຜູ້ບໍລິສຸດ
ຂອງອິດສະຣາເອນ, ແລະ ພຣະອົງບໍ່ຈ້າງ
ຜູ້ຮັບໃຊ້ໃຫ້ຢູ່ບ່ອນນັ້ນ, ແລະ ບໍ່ມີຊ່ອງທາງ
ໃດນອກຈາກປະຕູນັ້ນ, ເພາະຈະຫລອກ
ລວງພຣະອົງບໍ່ໄດ້, ເພາະອົງພຣະຜູ້ເປັນ
ເຈົ້າຄືພຣະນາມຂອງພຣະອົງ.
42 ແລະ ຜູ້ໃດໝັ່ນເຄາະ, ພຣະອົງຈະ
ເປີດໃຫ້ເຂົາ, ແລະ [ກ]ຄົນມີປັນຍາ ແລະ ຄົນ
ມີການສຶກສາຄືຄົນທີ່ຮັ່ງມີ ຊຶ່ງ [ຂ]ອວດອົ່ງ
ເພາະການສຶກສາຂອງເຂົາ, ແລະ ປັນຍາ
ຂອງເຂົາ, ແລະ ຄວາມຮັ່ງມີຂອງເຂົາ—
ແທ້ຈິງແລ້ວ, ເຂົາຄືຜູ້ທີ່ພຣະອົງກຽດຊັງ,
ພຣະອົງຈະບໍ່ເປີດປະຕູໃຫ້ເຂົາເວັ້ນເສຍ
ແຕ່ເຂົາຈະປະຖິ້ມສິ່ງເຫລົ່ານີ້, ແລະ ພິຈາ
ລະນາຕົນເອງເປັນ [ຄ]ຄົນໂງ່ຕໍ່ພຣະພັກຂອງ
ພຣະເຈົ້າ ແລະ ລົງມາສູ່ສ່ວນເລິກແຫ່ງ
ຄວາມ [ງ]ຖ່ອມຕົວທີ່ສຸດ.
43 ແຕ່ເລື່ອງຂອງຄົນທີ່ມີປັນຍາ ແລະ
ຄົນຮອບຄອບຈະຖືກ [ກ]ປິດບັງຈາກເຂົາ
ຕະຫລອດການ—ແທ້ຈິງແລ້ວ, ຄວາມສຸກ
ນັ້ນ ຊຶ່ງຕຽມໄວ້ໃຫ້ໄພ່ພົນຂອງພຣະເຈົ້າ.
44 ໂອ້, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຈົ່ງຈື່ຈຳຄຳເວົ້າຂອງຂ້າພະເຈົ້າໄວ້.
ຈົ່ງເບິ່ງ, ຂ້າພະເຈົ້າຖອດອາພອນຂອງຂ້າ
ພະເຈົ້າອອກ ແລະ ສັ່ນມັນຕໍ່ໜ້າທ່ານ, ຂ້າ
ພະເຈົ້າອະທິຖານຕໍ່ພຣະເຈົ້າແຫ່ງຄວາມ
ລອດຂອງຂ້າພະເຈົ້າ ໃຫ້ພຣະອົງທອດ

39 *ກ* 2 ນຟ 28:20–22; 32:8; ມຊຢ 2:32; 4:14; ແອວ 30:53.
*ຂ* ຣມ 8:6. ຄມພ ການມະລົນ.
*ຄ* ຄມພ ຄວາມຕາຍທາງວິນຍານ.
*ງ* ສພສ 11:19.
*ຈ* ຄມພ ຊີວິດນິລັນດອນ.
40 *ກ* ຄມພ ຈິງ, ຄວາມຈິງ.
*ຂ* 1 ນຟ 16:2; 2 ນຟ 28:28; 33:5.
41 *ກ* 1 ນຟ 6:4; ຢຄ 1:7; ອມນ 1:26; ມຣມ 10:30–32.
*ຂ* 2 ນຟ 31:17–21; ແອວ 37:46; ຄພ 132:22, 25.
*ຄ* ລກ 13:24; 2 ນຟ 33:9; ຮລມ 3:29–30.
*ງ* 2 ນຟ 31:9, 17–18; 3 ນຟ 14:13–14; ຄພ 43:7; 137:2.
42 *ກ* ມທ 11:25.
*ຂ* ຄມພ ຈອງຫອງ, ຄວາມຈອງຫອງ.
*ຄ* 1 ກຣທ 3:18–21.
*ງ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
43 *ກ* 1 ກຣທ 2:9–16.

ພຣະ ເນດ ເບິ່ງຂ້າພະ ເຈົ້າດ້ວຍ ສາຍ ພຣະ
ເນດ [ກ]ອັນຖີ່ຖ້ວນ; ດັ່ງນັ້ນ, ທ່ານຈຶ່ງຈະຮູ້ໃນ
ວັນສຸດທ້າຍເມື່ອຄົນທັງປວງຈະຖືກພິພາກ
ສາຕາມການກະທຳຂອງເຂົາ, ວ່າພຣະເຈົ້າ
ຂອງອິດສະຣາເອນ ເຫັນວ່າ ຂ້າພະ ເຈົ້າ
[ຂ]ສັ່ນຄວາມຊົ່ວຮ້າຍຂອງທ່ານຈາກຈິດວິນ
ຍານ ຂອງຂ້າພະ ເຈົ້າແລ້ວ, ແລະ ວ່າຂ້າ
ພະເຈົ້າຢືນຢູ່ດ້ວຍຄວາມສົດໃສຕໍ່ພຣະພັກ
ຂອງພຣະອົງ ແລະ [ຄ]ປາດສະຈາກເລືອດ
ຂອງທ່ານ.
45 ໂອ້, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຈົ່ງຫັນໜ້າໜີຈາກບາບຂອງທ່ານ, ຈົ່ງ
ສັ່ນ [ກ]ສາຍໂສ້ຂອງມັນທີ່ຢາກມັດທ່ານໃຫ້
ແໜ້ນ; ຈົ່ງມາເຝົ້າພຣະເຈົ້າ ພຣະອົງນັ້ນຜູ້
ເປັນ [ຂ]ດານຫີນແຫ່ງຄວາມລອດຂອງທ່ານ.
46 ຈົ່ງຕຽມຈິດວິນຍານຂອງທ່ານໄວ້
ສຳລັບວັນອັນຮຸ່ງເຮືອງເຫລືອງເຫລື້ອມ
ນັ້ນ ເມື່ອຈະຈັດ [ກ]ຄວາມຍຸດຕິທຳໃຫ້ແກ່
ຄົນຊອບທຳ, ແມ່ນວັນແຫ່ງ [ຂ]ການພິພາກ
ສາເພື່ອທ່ານຈະບໍ່ໄດ້ຫົດຢູ່ໃນຄວາມຢ້ານ
ກົວອັນເປັນຕາຢ້ານ ເພື່ອທ່ານຈະບໍ່ໄດ້ຈົດ
ຈຳ [ຄ]ຄວາມຜິດອັນເປັນຕາຢ້ານຂອງທ່ານ
ໃນຄວາມສົມບູນ ແລະ ຖືກບັງຄັບໃຫ້ຮ້ອງ
ວ່າ: ສັກສິດ, ການພິພາກສາຂອງພຣະອົງ
ສັກສິດ, ໂອ້ ອົງພຣະຜູ້ເປັນເຈົ້າ [ງ]ຜູ້ຊົງລິດ
ອຳນາດຍິ່ງໃຫຍ່—ແຕ່ຂ້ານ້ອຍຮູ້ຄວາມ
ຜິດຂອງຂ້ານ້ອຍ; ຂ້ານ້ອຍລ່ວງລະເມີດ
ກົດຂອງພຣະອົງ, ແລະ ການລ່ວງລະເມີດ
ຂອງຂ້ານ້ອຍເປັນຂອງຂ້ານ້ອຍ; ແລະ
ມານໄດ້ຮັບຂ້ານ້ອຍແລ້ວ, ຈົນຂ້ານ້ອຍ
ເປັນເຫຍື່ອຂອງຄວາມທຸກທໍລະມານອັນ
ເປັນຕາຢ້ານຂອງມັນ.
47 ແຕ່ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າ,
ສົມຄວນບໍທີ່ຂ້າພະເຈົ້າຈະປຸກໃຫ້ທ່ານຕື່ນ
ຂຶ້ນຫາຄວາມເປັນຈິງອັນເປັນຕາຢ້ານຂອງ
ເລື່ອງເຫລົ່ານີ້? ຂ້າພະເຈົ້າຈະທໍລະມານ
ຈິດວິນຍານຂອງທ່ານ ຫລື ຖ້າຫາກຈິດ
ໃຈຂອງທ່ານບໍລິສຸດ? ຂ້າພະເຈົ້າຈະໃຫ້
ຄວາມແຈ່ມແຈ້ງກັບທ່ານຕາມຄວາມແຈ່ມ
ແຈ້ງຂອງຄວາມຈິງບໍ ຖ້າຫາກທ່ານພົ້ນ
ຈາກບາບ?
48 ຈົ່ງເບິ່ງ, ຖ້າຫາກທ່ານບໍລິສຸດ ຂ້າພະ
ເຈົ້າຈະ ເວົ້າກັບທ່ານ ເຖິງຄວາມ ບໍລິສຸດ,
ແຕ່ເນື່ອງຈາກທ່ານບໍ່ບໍລິສຸດ, ແລະ ທ່ານ
ນັບຖືຂ້າພະເຈົ້າເປັນຜູ້ສອນ ຈຶ່ງສົມຄວນ
ທີ່ຂ້າພະເຈົ້າຈຳເປັນຕ້ອງ [ກ]ສິດສອນທ່ານ
ເລື່ອງຜົນຈາກ [ຂ]ບາບ.
49 ຈົ່ງເບິ່ງ, ຈິດວິນຍານຂອງຂ້າພະເຈົ້າ
ກຽດຊັງບາບ, ແລະ ໃຈຂອງຂ້າພະເຈົ້າ
ເບີກບານໃນຄວາມຊອບທຳ, ແລະ ຂ້າພະ
ເຈົ້າຈະ [ກ]ສັນລະເສີນພຣະນາມອັນສັກສິດ
ຂອງພຣະເຈົ້າຂອງຂ້າພະເຈົ້າ.
50 ມາເຖີດ, ພີ່ນ້ອງຂອງຂ້າພະເຈົ້າທຸກ
ຄົນທີ່ຫິວນ້ຳ, ຈົ່ງມາຫາ [ກ]ນ້ຳ, ແລະ ຜູ້ທີ່ບໍ່ມີ
ເງິນຈົ່ງມາຊື້ກິນເຖີດ; ແທ້ຈິງແລ້ວ, ຈົ່ງມາຊື້
ເຫລົ້າອະງຸ່ນ ແລະ ນ້ຳນົມໂດຍບໍ່ຕ້ອງເສຍ
[ຂ]ເງິນ ແລະ ບໍ່ຄິດລາຄາ.
51 ດັ່ງນັ້ນ, ຢ່າໄດ້ໃຊ້ເງິນເພື່ອສິ່ງທີ່ບໍ່ມີ
ຄຸນຄ່າ ຫລື ໃຊ້ [ກ]ແຮງງານຂອງທ່ານ ເພື່ອ
ສິ່ງທີ່ໃຫ້ຄວາມພໍໃຈບໍ່ໄດ້. ຈົ່ງເຊື່ອຟັງຂ້າ

44 ກ ຢຄ 2:10.
ຂ ຢຄ 1:19.
ຄ ຢຄ 2:2; ມຊຢ 2:28.
45 ກ 2 ນຟ 28:22; ແອວ 36:18.
ຂ ຄມພ ຫີນ.
46 ກ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
ຂ ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
ຄ ມຊຢ 3:25.
ງ 1 ນຟ 1:14; ມຊ 2:1.
48 ກ ແອວ 37:32.
ຂ ຄມພ ບາບ.
49 ກ 1 ນຟ 18:16.
50 ກ ຄມພ ນ້ຳທີ່ປະກອບດ້ວຍຊີວິດ.
ຂ ແອວ 42:27.
51 ກ ອຊຢ 55:1–2.

ພະເຈົ້າຢ່າງພາກພຽນ ແລະ ຈື່ຈຳຖ້ອຍຄຳ
ທີ່ຂ້າພະເຈົ້າເວົ້າໄວ້ ແລະ ຈົ່ງມາເຝົ້າພຣະ
ຜູ້ບໍລິສຸດຂອງອິດສະຣາເອນ ແລະ [ຂ]ຢູ່ກັບ
ສິ່ງທີ່ບໍ່ຕາຍ ແລະ ເນົ່າເປື່ອຍບໍ່ໄດ້ ແລະ
ຈົ່ງໃຫ້ຈິດວິນຍານຂອງທ່ານເບີກບານໃນ
ຄວາມສົມບູນ.
52 ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຈົ່ງຈື່ຈຳພຣະຄຳຂອງພຣະເຈົ້າຂອງ
ທ່ານ; ຈົ່ງອະທິຖານຫາພຣະອົງໃນຕອນ
ກາງເວັນ, ແລະ ຖວາຍ [ກ]ຄວາມຂອບພຣະ
ຄຸນແດ່ພຣະນາມອັນສັກສິດຂອງພຣະອົງ
ໃນຕອນກາງຄືນຢູ່ສະເໝີ. ຈົ່ງໃຫ້ໃຈຂອງ
ທ່ານປິຕິຍິນດີເຖີດ.
53 ແລະ ຈົ່ງເບິ່ງ, [ກ]ພັນທະສັນຍາຂອງ
ພຣະຜູ້ເປັນເຈົ້າຍິ່ງໃຫຍ່ພຽງໃດ, ແລະ
ການຖ່ອມຕົວຂອງພຣະອົງໃຫ້ລູກຫລານ
ມະນຸດຍິ່ງໃຫຍ່ພຽງໃດ; ແລະ ເພາະຄວາມ
ຍິ່ງໃຫຍ່ຂອງພຣະອົງ ແລະ ພຣະຄຸນ ແລະ
[ຂ]ພຣະເມດຕາຂອງພຣະອົງ, ພຣະອົງຈຶ່ງ
ສັນຍາກັບພວກເຮົາວ່າ ລູກຫລານຂອງ
ພວກເຮົາຈະບໍ່ຖືກທຳລາຍຈົນໝົດສິ້ນຕາມ
ທາງຂອງເນື້ອໜັງ, ແຕ່ວ່າພຣະອົງຈະຮັກ
ສາພວກເຂົາ; ແລະ ໃນຄົນລຸ້ນຕໍ່ໆໄປ,
ພວກເຂົາຈະກັບເປັນ [ຄ]ກິ່ງກ້ານອັນຊອບ
ທຳຂອງເຊື້ອສາຍອິດສະຣາເອນ.
54 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າຢາກເວົ້າກັບທ່ານອີກ, ແຕ່ໃນ
ມື້ອື່ນຂ້າພະເຈົ້າຈະປະກາດກັບທ່ານເຖິງ
ຂໍ້ຄວາມທີ່ຍັງເຫລືອຢູ່ຂອງຂ້າພະເຈົ້າ. ອາ
ແມນ.

## ບົດທີ 10

*ຢາໂຄບອະທິບາຍວ່າ ຊາວຢິວຈະຄຶງພຣະເຈົ້າຂອງພວກເຂົາໄວ້ເທິງໄມ້ກາງແຂນ—ພວກເຂົາຈະກະຈັດກະຈາຍໄປຈົນກວ່າພວກເຂົາເລີ່ມເຊື່ອຖືໃນພຣະອົງ—ອາເມຣິກາຈະເປັນແຜ່ນດິນແຫ່ງເສລີພາບທີ່ຈະບໍ່ມີກະສັດປົກຄອງ—ທຳຕົນເຂົ້າກັບພຣະເຈົ້າ ແລະ ຮັບຄວາມລອດຜ່ານທາງພຣະຄຸນຂອງພຣະອົງ. ປະມານ 559–545 ປີກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້າຢາໂຄບຂໍເວົ້າ
ກັບທ່ານອີກ ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າກ່ຽວກັບ [ກ]ກິ່ງງ່າອັນຊອບທຳນີ້ ຊຶ່ງຂ້າ
ພະເຈົ້າໄດ້ເວົ້າມາແລ້ວ.
2 ເພາະຈົ່ງເບິ່ງ, [ກ]ຄຳສັນຍາທີ່ພວກເຮົາ
ໄດ້ຮັບມາເປັນຄຳສັນຍາທີ່ໄດ້ເຮັດໄວ້ກັບ
ພວກເຮົາຕາມທາງຂອງເນື້ອໜັງ. ດັ່ງນັ້ນ
ເໝືອນດັ່ງສິ່ງທີ່ສະແດງກັບຂ້າພະເຈົ້າ
ແລ້ວວ່າ ລູກຫລານຂອງພວກເຮົາຢ່າງ
ຫລວງຫລາຍຈະຕາຍໃນເນື້ອໜັງເພາະ
ຄວາມບໍ່ເຊື່ອຖື, ເຖິງຢ່າງໃດກໍຕາມ, ພຣະ
ເຈົ້າຈະເມດຕາຄົນຢ່າງຫລວງຫລາຍ;
ແລະ ລູກຫລານຂອງພວກເຮົາຈະຖືກນຳ
ກັບຄືນມາເພື່ອເຂົາຈະໄດ້ມາຫາສິ່ງທີ່ຈະ
ໃຫ້ຄວາມຮູ້ອັນແທ້ຈິງແກ່ເຂົາກ່ຽວກັບ
ພຣະຜູ້ໄຖ່ຂອງເຂົາ.
3 ດັ່ງນັ້ນ, ດັ່ງທີ່ຂ້າພະເຈົ້າໄດ້ເວົ້າກັບ
ທ່ານມາແລ້ວ, ຈຶ່ງຈຳຕ້ອງເໝາະສົມທີ່
ພຣະຄຣິດ—ເພາະມື້ຄືນນີ້ [ກ]ທູດໄດ້ເວົ້າກັບ

51 *ຂ* 2 ນຟ 31:20; 32:3; 3 ນຟ 12:6.
52 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
53 *ກ* ຄມພ ພັນທະສັນຍາ.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
*ຄ* ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
**10** 1 *ກ* 1 ນຟ 15:12–16; 2 ນຟ 3:5; ຢຄ 5:43–45.
2 *ກ* 1 ນຟ 22:8; 3 ນຟ 5:21–26; 21:4–7.
3 *ກ* 2 ນຟ 25:19; ຢຄ 7:5; ມຣນ 7:22.

ຂ້າພະ ເຈົ້າ ວ່າ ນີ້ ຈະ ເປັນ ພຣະ ນາມ ຂອງ
ພຣະອົງ—ຈະ [ຂ]ສະເດັດມາໃນບັນດາຊາວ
ຢິວ, ໃນບັນດາຜູ້ທີ່ຊົ່ວຫລາຍກວ່າພວກອື່ນ
ໃນໂລກ; ແລະ ເຂົາຈະ [ຄ]ຄຶງພຣະອົງໄວ້
ເທິງໄມ້ກາງແຂນ—ເພາະມັນຈຳຕ້ອງເປັນ
ໄປແນວນັ້ນ ກັບພຣະເຈົ້າຂອງພວກເຮົາ,
ແລະ ຈະບໍ່ມີປະຊາຊາດອື່ນໃດໃນແຜ່ນ
ດິນໂລກນີ້ຈະ [ງ]ຄຶງ [ຈ]ພຣະເຈົ້າຂອງເຂົາໄວ້
ເທິງໄມ້ກາງແຂນ.
4 ເພາະຖ້າຫາກ [ກ]ສິ່ງມະຫັດສະຈັນທີ່
ຍິ່ງໃຫຍ່ໄດ້ຖືກກະທຳຂຶ້ນໃນບັນດາປະຊາ
ຊາດອື່ນໆແລ້ວ ເຂົາຈະກັບໃຈ, ແລະ ຮູ້ຈັກ
ວ່າ ພຣະອົງຄືພຣະເຈົ້າຂອງເຂົາ.
5 ແຕ່ເພາະ [ກ]ການຫລອກລວງຂອງປະ
ໂລຫິດ ແລະ ຄວາມຊົ່ວຮ້າຍຂອງຄົນທີ່
ເຢຣູຊາເລັມຈະເຮັດຄໍແຂງ ກັບພຣະອົງ,
ໃຫ້ພຣະອົງຖືກຄຶງໄວ້ເທິງໄມ້ກາງແຂນ.
6 ດັ່ງນັ້ນ, ຍ້ອນຄວາມຊົ່ວຮ້າຍຂອງເຂົາ,
ຄວາມພິນາດ, ຄວາມອຶດຢາກ, ພະຍາດໂລ
ຄາ, ແລະ ການນອງເລືອດຈະເກີດຂຶ້ນກັບ
ເຂົາ; ແລະ ຜູ້ໃດທີ່ບໍ່ຖືກທຳລາຍກໍຈະ [ກ]ກະ
ຈັດກະຈາຍໄປໃນບັນດາທຸກປະຊາຊາດ.
7 ແຕ່ຈົ່ງເບິ່ງ, [ກ]ອົງພຣະຜູ້ເປັນເຈົ້າໄດ້
ກ່າວດັ່ງນີ້: [ຂ]ເວລານັ້ນຈະມາເຖິງທີ່ພວກ
ເຂົາຈະເຊື່ອຖືໃນເຮົາວ່າ ເຮົາຄືພຣະຄຣິດ,
ເມື່ອນັ້ນເຮົາໃຫ້ພັນທະສັນຍາກັບບັນພະບຸ
ລຸດຂອງພວກເຂົາວ່າ ພວກເຂົາຈະຖືກນຳ
ກັບຄືນມາໃນແຜ່ນດິນໂລກ ໃນເນື້ອໜັງ
ເພື່ອໄປຫາແຜ່ນດິນຊຶ່ງເປັນມູນມໍລະດົກ
ຂອງພວກເຂົາ.
8 ແລະ ເຫດ ການ ຈະ ບັງ ເກີດ ຂຶ້ນ ຄື
ພວກເຂົາຈະຖືກ [ກ]ເຕົ້າໂຮມເຂົ້າມາຈາກ
ການແຕກກະຈັດກະຈາຍໄປເປັນ ເວລາ
ດົນນານຂອງພວກເຂົາ, ຈາກ [ຂ]ເກາະໃນ
ທະເລ, ແລະ ຈາກສີ່ທິດຂອງແຜ່ນດິນ
ໂລກ; ແລະ ປະຊາຊາດຂອງຄົນຕ່າງຊາດ
ຈະຍິ່ງໃຫຍ່ໃນສາຍພຣະເນດຂອງເຮົາ
ໃນ [ຄ]ການນຳພວກເຂົາໄປຫາແຜ່ນດິນຊຶ່ງ
ເປັນມູນມໍລະດົກຂອງພວກເຂົາ, ພຣະເຈົ້າ
ກ່າວ.
9 [ກ]ແທ້ ຈິງ ແລ້ວ, ກະສັດ ຂອງ ຄົນ ຕ່າງ
ຊາດຈະເປັນພໍ່ລ້ຽງຂອງເຂົາ ແລະ ລາຊິ
ນີທັງຫລາຍຈະເປັນແມ່ລ້ຽງຂອງເຂົາ; ດັ່ງ
ນັ້ນ, [ຂ]ຄຳສັນຍາຂອງພຣະຜູ້ເປັນເຈົ້າຈຶ່ງຍິ່ງ
ໃຫຍ່ຕໍ່ຄົນຕ່າງຊາດ, ເພາະພຣະອົງໄດ້ຮັບ
ສັ່ງໄວ້, ແລະ ແມ່ນໃຜຈະໂຕ້ຖຽງໄດ້?
10 ແຕ່ຈົ່ງເບິ່ງ, ພຣະເຈົ້າໄດ້ກ່າວວ່າ,
ແຜ່ນດິນຈະເປັນແຜ່ນດິນມູນມໍລະດົກຂອງ
ເຈົ້າ, ແລະ [ກ]ຄົນຕ່າງຊາດຈະໄດ້ຮັບພອນ
ຢູ່ໃນແຜ່ນດິນນີ້.
11 ແລະ ແຜ່ນດິນນີ້ຈະເປັນແຜ່ນດິນ
ແຫ່ງ [ກ]ເສລີພາບສຳລັບຄົນຕ່າງຊາດ, ແລະ
ບໍ່ມີ [ຂ]ກະສັດໃນແຜ່ນດິນນີ້ ທີ່ຈະຍົກໄວ້ໃຫ້
ຄົນຕ່າງຊາດ.

---

3 ຂ ຄມພ ພຣະເຢຊູຄຣິດ—ການທຳນາຍກ່ຽວກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ.
ຄ 1 ນຟ 11:33; ມຊຍ 3:9; ຄພ 45:52–53.
ງ ລກ 23:20–24.
ຈ 1 ນຟ 19:10.
4 ກ ຄມພ ມະຫັດສະຈັນ, ການມະຫັດສະຈັນ.
5 ກ ລກ 22:2. ຄມພ ການຫລອກລວງຂອງປະໂລຫິດ.
6 ກ 1 ນຟ 19:13–14. ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ.
7 ກ ຄມພ ພຣະຜູ້ເປັນເຈົ້າ.
ຂ 2 ນຟ 25:16–17.
8 ກ ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
ຂ 1 ນຟ 22:4; 2 ນຟ 10:20–22; ຄພ 133:8.
ຄ 1 ນຟ 22:8.
9 ກ ອຊຍ 49:22–23.
ຂ 1 ນຟ 22:8–9; ຄພ 3:19–20.
10 ກ 2 ນຟ 6:12.
11 ກ ຄມພ ອິດສະລະ, ອິດສະລະພາບ.
ຂ ມຊຍ 29:31–32.

12 ແລະ ເຮົາຈະເສີມກຳລັງແຜ່ນດິນນີ້
ໃຫ້ສາມາດຕ້ານທານກັບປະຊາຊາດອື່ນໆ
ທັງໝົດ.
13 ແລະ ຜູ້ທີ່ [ກ]ຕໍ່ສູ້ກັບຊີໂອນຈະຕ້ອງ
[ຂ]ຕາຍ, ພຣະເຈົ້າກ່າວ.
14 ແລະ ຜູ້ທີ່ແຕ່ງຕັ້ງກະສັດໃຫ້ຂັດແຍ້ງ
ເຮົາຈະຕ້ອງຕາຍ, ເພາະເຮົາພຣະຜູ້ເປັນ
ເຈົ້າ [ກ]ກະສັດແຫ່ງສະຫວັນຈະເປັນກະສັດ
ຂອງເຂົາ, ແລະ ຜູ້ໄດ້ຍິນຄຳເວົ້າຂອງເຮົາ,
ເຮົາຈະເປັນ [ຂ]ແສງສະຫວ່າງໃຫ້ແກ່ເຂົາ
ຕະຫລອດໄປ.
15 ດັ່ງນັ້ນ, ເພາະເຫດນີ້ ເພື່ອ [ກ]ພັນທະ
ສັນຍາຂອງເຮົາຊຶ່ງເຮົາກະທຳໄວ້ກັບລູກ
ຫລານມະນຸດຈະສຳເລັດ ເພື່ອເຮົາຈະໄດ້
ເຮັດກັບເຂົາເວລາທີ່ເຂົາຢູ່ໃນເນື້ອໜັງ,
ເຮົາຈະຕ້ອງທຳລາຍວຽກງານ [ຂ]ລັບແຫ່ງ
[ຄ]ຄວາມມືດ ແລະ ແຫ່ງຄາດຕະກອນ ແລະ
ແຫ່ງຄວາມໜ້າກຽດຊັງ.
16 ດັ່ງນັ້ນ, ຜູ້ທີ່ຕໍ່ສູ້ກັບ [ກ]ຊີໂອນ, ທັງຊາວ
ຢິວ ແລະ ຄົນຕ່າງຊາດ, ທັງຂ້າທາດ ແລະ
ຜູ້ເປັນອິດສະລະ, ທັງຊາຍ ແລະ ຍິງຈະ
ຕ້ອງຕາຍເພາະ [ຂ]ເຂົາເປັນໂສເພນີຂອງ
ແຜ່ນດິນໂລກທັງໝົດ; ເພາະ [ຄ]ຜູ້ໃດ [ງ]ບໍ່ໄດ້
ເປັນຝ່າຍເຮົາ ຈະ [ຈ]ຕໍ່ຕ້ານເຮົາ, ພຣະເຈົ້າ
ຂອງພວກເຮົາກ່າວ.
17 ເພາະເຮົາຈະເຮັດໃຫ້ສັນຍາຂອງ
ເຮົາ ຊຶ່ງເຮົາກະທຳໄວ້ກັບລູກຫລານມະນຸດ
[ກ]ສຳເລັດຄື, ເຮົາຈະເຮັດກັບເຂົາເວລາທີ່
ເຂົາຢູ່ໃນເນື້ອໜັງ—
18 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ພຣະເຈົ້າກ່າວໄວ້ດັ່ງນີ້: ເຮົາຈະ
ເຮັດໃຫ້ລູກຫລານຂອງເຈົ້າເປັນທຸກດ້ວຍ
ມືຂອງຄົນຕ່າງຊາດ; ເຖິງຢ່າງໃດກໍຕາມ,
ເຮົາຈະເຮັດໃຫ້ໃຈຂອງ [ກ]ຄົນຕ່າງຊາດ
ອ່ອນໂຍນເພື່ອເຂົາຈະເປັນຄືບິດາຂອງ
ຄົນເຫລົ່ານັ້ນ; ດັ່ງນັ້ນ, ຄົນຕ່າງຊາດຈະໄດ້
[ຂ]ຮັບພອນ ແລະ ຖືກ [ຄ]ນັບເຂົ້າຢູ່ກັບບັນດາ
ເຊື້ອສາຍອິດສະຣາເອນ.
19 ດັ່ງນັ້ນ, ເຮົາຈະ [ກ]ຕັ້ງແຜ່ນດິນນີ້ໄວ້
ເພື່ອລູກຫລານຂອງເຈົ້າ, ແລະ ຜູ້ທີ່ຈະຖືກ
ນັບເຂົ້າຢູ່ໃນບັນດາລູກຫລານຂອງເຈົ້າ
ຕະຫລອດໄປ, ເພື່ອໃຫ້ເປັນແຜ່ນດິນມູນມໍ
ລະດົກຂອງພວກເຂົາ; ເພາະມັນເປັນແຜ່ນ
ດິນທີ່ປະເສີດ ເໜືອກວ່າແຜ່ນດິນອື່ນໃດ
ທັງສິ້ນ, ພຣະເຈົ້າໄດ້ກ່າວກັບຂ້າພະເຈົ້າ
ວ່າ, ດັ່ງນັ້ນ, ເຮົາຈະໃຫ້ຄົນທັງປວງທີ່ອາ
ໄສຢູ່ໃນນັ້ນເປັນຜູ້ທີ່ນະມັດສະການເຮົາ,
ພຣະເຈົ້າກ່າວ.
20 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ໂດຍທີ່ເຫັນວ່າ ພຣະເຈົ້າຂອງ
ພວກເຮົາຜູ້ເມດຕາ ປະທານຄວາມຮູ້ອັນ
ຍິ່ງໃຫຍ່ໃຫ້ພວກເຮົາກ່ຽວກັບສິ່ງເຫລົ່ານີ້,
ຂໍໃຫ້ພວກເຮົາລະນຶກເຖິງພຣະອົງ ແລະ
ປະຖິ້ມບາບຂອງພວກເຮົາ, ແລະ ຢ່າໄດ້

13 *ກ* 1 ນຟ 22:14, 19.
*ຂ* ອຊຢ 60:12.
14 *ກ* ແອວ 5:50;
ຄພ 38:21–22;
128:22–23;
ມຊ 7:53.
*ຂ* ຄມພ ຄວາມສະຫວ່າງ,
ຄວາມສະຫວ່າງ
ຂອງພຣະຄຣິດ.
15 *ກ* ຄມພ ພັນທະສັນຍາ.
*ຂ* ຮລມ 3:23.
ຄມພ ການມົ້ວສຸມລັບ.
*ຄ* ຄມພ ຄວາມມືດ
ທາງວິນຍານ.
16 *ກ* ຄມພ ຊີໂອນ.
*ຂ* 1 ນຟ 13:4–5.
*ຄ* 1 ນຟ 14:10.
*ງ* 1 ນຟ 22:13–23;
2 ນຟ 28:15–32;
3 ນຟ 16:8–15;
ອທ 2:9.
*ຈ* ມທ 12:30.
17 *ກ* ຄພ 1:38.
18 *ກ* ລກ 13:28–30;
ຄພ 45:7–30.
*ຂ* ອຟຊ 3:6.
*ຄ* ຄລຕ 3:7, 29;
1 ນຟ 14:1–2;
3 ນຟ 16:13;
21:6, 22; 30:2;
ອຣຣ 2:9–11.
19 *ກ* 2 ນຟ 3:2.

ເຮັດຄຳຕົກ ເພາະວ່າພວກເຮົາບໍ່ໄດ້ຖືກປະ
ຖິ້ມ; ເຖິງຢ່າງໃດກໍຕາມ, ພວກເຮົາຍັງຖືກ
[ກ]ຂັບໄລ່ອອກຈາກແຜ່ນດິນ ຊຶ່ງເປັນມູນມໍ
ລະດົກຂອງພວກເຮົາ; ແຕ່ພວກເຮົາຖືກນຳ
ມາຫາ [ຂ]ແຜ່ນດິນທີ່ດີກວ່າ, ເພາະພຣະຜູ້
ເປັນເຈົ້າໄດ້ເຮັດໃຫ້ທະເລເປັນ [ຄ]ທາງເດີນ
ຂອງພວກເຮົາ ແລະ ພວກເຮົາຢູ່ໃນ [ງ]ເກາະ
ແຫ່ງໜຶ່ງໃນທະເລ.
21 ແຕ່ຄຳສັນຍາຂອງພຣະຜູ້ເປັນເຈົ້າ
ກັບຜູ້ທີ່ຢູ່ໃນ [ກ]ເກາະໃນທະເລນັ້ນຍິ່ງໃຫຍ່;
ດັ່ງນັ້ນ, ເມື່ອກ່າວຄຳວ່າ ເກາະຈຶ່ງຈຳຕ້ອງມີ
ຫລາຍກວ່ານີ້, ເພາະມັນເປັນບ່ອນຢູ່ອາໄສ
ຂອງພີ່ນ້ອງຂອງພວກເຮົາຄືກັນ.
22 ເພາະຈົ່ງເບິ່ງ, ອົງພຣະຜູ້ເປັນເຈົ້າໄດ້
[ກ]ພາຜູ້ຄົນໄປຈາກເຊື້ອສາຍອິດສະຣາເອນ
ເປັນບາງຄັ້ງ ຕາມພຣະປະສົງ ແລະ ຄວາມ
ພໍພຣະໄທຂອງພຣະອົງ. ແລະ ບັດນີ້ຈົ່ງ
ເບິ່ງ, ພຣະຜູ້ເປັນເຈົ້າໄດ້ຈື່ຈຳເຂົາທຸກຄົນທີ່
ແຕກແຍກອອກມາ, ດັ່ງນັ້ນ, ພຣະອົງຈຶ່ງຈື່
ຈຳພວກເຮົາເໝືອນກັນ.
23 ສະນັ້ນ, ຈົ່ງເຮັດໃຫ້ໃຈຂອງທ່ານຊື່ນ
ບານ, ແລະ ຈົ່ງຈື່ຈຳໄວ້ວ່າ ທ່ານ [ກ]ມີສິດທີ່
ຈະ [ຂ]ເຮັດເພື່ອຕົນເອງ—ທີ່ຈະ [ຄ]ເລືອກທາງ
ແຫ່ງຄວາມຕາຍອັນເປັນນິດ ຫລື ທາງແຫ່ງ
ຊີວິດນິລັນດອນ.
24 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຈົ່ງທຳຕົນເອງໃຫ້ເຂົ້າກັບພຣະປະສົງ
ຂອງພຣະເຈົ້າ, ແລະ ບໍ່ແມ່ນເຂົ້າກັບຄວາມ
ປະສົງຂອງມານ ແລະ ເນື້ອໜັງ ແລະ ຈົ່ງ
ຈື່ຈຳໄວ້ຫລັງຈາກທ່ານທຳຕົນເອງເຂົ້າກັບ
ພຣະເຈົ້າແລ້ວ, ວ່າຈະເປັນໂດຍ [ກ]ພຣະຄຸນ
ຂອງພຣະເຈົ້າເທົ່ານັ້ນທີ່ທ່ານຈະ [ຂ]ລອດ.
25 ດັ່ງນັ້ນ, ຂໍໃຫ້ພຣະເຈົ້າຈົ່ງຍົກທ່ານ
ຂຶ້ນຈາກຄວາມຕາຍໂດຍອຳນາດແຫ່ງ
ການຟື້ນຄືນຊີວິດເຖີດ, ແລະ ຈາກຄວາມ
ຕາຍອັນເປັນນິດໂດຍອຳນາດແຫ່ງ [ກ]ການ
ຊົດໃຊ້ ເພື່ອທ່ານຈະຖືກຮັບເຂົ້າໃນອານາ
ຈັກນິລັນດອນຂອງພຣະເຈົ້າ ເພື່ອທ່ານຈະ
ໄດ້ສັນລະເສີນພຣະອົງໂດຍພຣະຄຸນແຫ່ງ
ສະຫວັນ. ອາແມນ.

## ບົດທີ 11

*ຢາໂຄບໄດ້ເຫັນພຣະຜູ້ໄຖ່ຂອງລາວ—ກົດຂອງໂມເຊສະແດງເຖິງພຣະຄຣິດ ແລະ ພິສູດວ່າ ພຣະອົງຈະສະເດັດມາ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, [ກ]ຢາໂຄບ ໄດ້ ເວົ້າ ອີກ
ຫລາຍເລື່ອງກັບຄົນຂອງຂ້າພະເຈົ້າໃນ
ເວລານັ້ນ; ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າ
ໄດ້ [ຂ]ບັນທຶກໄວ້ພຽງແຕ່ເລື່ອງເຫລົ່ານີ້,
ເພາະເລື່ອງທີ່ບັນທຶກໄວ້ພຽງພໍສຳລັບຂ້າ
ພະເຈົ້າ.
2 ແລະ ບັດນີ້ຂ້າພະເຈົ້ານີໄຟໄດ້ບັນທຶກ
ຄຳເວົ້າຂອງ [ກ]ເອຊາຢາອີກ, ເພາະຈິດວິນ
ຍານຂອງຂ້າພະເຈົ້າພໍໃຈໃນຄຳເວົ້າຂອງ
ເພິ່ນ. ເພາະຂ້າພະເຈົ້າຈະປຽບທຽບຄຳເວົ້າ
ຂອງເພິ່ນກັບຄົນຂອງຂ້າພະເຈົ້າ, ແລະ ຂ້າ
ພະເຈົ້າຈະສົ່ງອອກໄປເຖິງລູກຫລານຂອງ
ຂ້າພະເຈົ້າທັງໝົດ, ເພາະເພິ່ນໄດ້ເຫັນ
[ຂ]ພຣະຜູ້ໄຖ່ຂອງຂ້າພະເຈົ້າແທ້ໆ ເໝືອນ
ດັ່ງຂ້າພະເຈົ້າໄດ້ເຫັນພຣະອົງ.

---

20 *ກ* 1 ນຟ 2:1–4.
*ຂ* 1 ນຟ 2:20.
ຄມພ ແຜ່ນດິນ
ແຫ່ງຄຳສັນຍາ.
*ຄ* 1 ນຟ 18:5–23.
*ງ* ອຊຢ 11:10–12.
21 *ກ* 1 ນຟ 19:15–16; 22:4.
22 *ກ* 1 ນຟ 22:4.
23 *ກ* ຄມພ ອຳເພີໃຈ.
*ຂ* 2 ນຟ 2:16.
*ຄ* ພບຍ 30:19.
24 *ກ* ຄມພ ພຣະຄຸນ.
*ຂ* ຄມພ ລອດ, ຄວາມລອດ.
25 *ກ* ຄມພ ຊົດໃຊ້, ການຊົດໃຊ້.
**11** 1 *ກ* 2 ນຟ 6:1–10.
*ຂ* 2 ນຟ 31:1.
2 *ກ* 3 ນຟ 23:1.
*ຂ* ຄມພ ພຣະຜູ້ໄຖ່.

3 ແລະ ນ້ອງ ຊາຍ ຂອງ ຂ້າ ພະ ເຈົ້າ
ຢາໂຄບກໍໄດ້ [ກ]ເຫັນພຣະອົງຄືກັນກັບຂ້າ
ພະເຈົ້າໄດ້ເຫັນພຣະອົງ; ດັ່ງນັ້ນ, ຂ້າພະ
ເຈົ້າຈະສົ່ງຄຳເວົ້າຂອງຄົນທັງສອງອອກໄປ
ເຖິງລູກຫລານຂອງຂ້າພະເຈົ້າ ເພື່ອພິສູດ
ກັບພວກເຂົາວ່າ ຄຳເວົ້າຂອງຂ້າພະເຈົ້າ
ເປັນຄວາມຈິງ. ດັ່ງນັ້ນ, ໂດຍຄຳເວົ້າຂອງ
ຄົນ [ຂ]ສາມຄົນ, ພຣະເຈົ້າໄດ້ກ່າວວ່າ ເຮົາ
ຈະສະຖາປະນາຄຳເວົ້າຂອງເຮົາ. ເຖິງຢ່າງ
ໃດກໍຕາມ, ພຣະເຈົ້າຍັງໄດ້ສົ່ງພະຍານມາ
ອີກ, ແລະ ພຣະອົງພິສູດພຣະຄຳຂອງ
ພຣະອົງທັງໝົດ.
4 ຈົ່ງເບິ່ງ, ຈິດວິນຍານຂອງຂ້າພະເຈົ້າ
ພໍໃຈໃນ [ກ]ການພິສູດຄວາມຈິງຂອງ [ຂ]ການ
ສະເດັດມາຂອງພຣະຄຣິດຕໍ່ຄົນຂອງຂ້າ
ພະເຈົ້າ ເພື່ອຈຸດມຸ້ງໝາຍນີ້ຈຶ່ງມີ [ຄ]ກົດຂອງ
ໂມເຊໃຫ້ໄວ້; ແລະ ທຸກຢ່າງທີ່ພຣະເຈົ້າ
ປະທານໃຫ້ມະນຸດນັບຕັ້ງແຕ່ການເລີ່ມຕົ້ນ
ຂອງໂລກມາເປັນການສະແດງເຖິງພຣະ
ອົງ.
5 ແລະ ຈິດວິນຍານຂອງຂ້າພະເຈົ້າພໍ
ໃຈໃນ [ກ]ພັນທະສັນຍາຂອງພຣະຜູ້ເປັນ
ເຈົ້າອີກ ຊຶ່ງພຣະອົງໄດ້ເຮັດໄວ້ກັບບັນພະ
ບຸລຸດຂອງພວກເຮົາ; ແທ້ຈິງແລ້ວ, ຈິດວິນ
ຍານຂອງຂ້າພະເຈົ້າພໍໃຈໃນພຣະຄຸນຂອງ
ພຣະອົງ, ແລະ ໃນຄວາມຍຸດຕິທຳຂອງ
ພຣະອົງ, ແລະ ພຣະອຳນາດ ແລະ ພຣະ
ເມດຕາໃນແຜນອັນຍິ່ງໃຫຍ່ ແລະ ນິລັນ
ດອນແຫ່ງການປົດປ່ອຍຈາກຄວາມຕາຍ.
6 ແລະ ຈິດວິນຍານຂອງຂ້າພະເຈົ້າພໍ
ໃຈໃນການພິສູດຕໍ່ຜູ້ຄົນຂອງຂ້າພະເຈົ້າວ່າ
[ກ]ຖ້າຫາກພຣະຄຣິດບໍ່ສະເດັດມາ ມະນຸດ
ທຸກຄົນຈະຕ້ອງຕາຍ.
7 ເພາະຖ້າຫາກ [ກ]ບໍ່ມີພຣະຄຣິດແລ້ວ ກໍ
ບໍ່ມີພຣະເຈົ້າ; ແລະ ຖ້າຫາກບໍ່ມີພຣະເຈົ້າ,
ພວກເຮົາກໍບໍ່ເປັນຢູ່ເພາະ [ຂ]ການສ້າງຈະ
ມີບໍ່ໄດ້. ແຕ່ມີພຣະເຈົ້າ ແລະ ພຣະອົງຄື
ພຣະຄຣິດ ແລະ ພຣະອົງຈະສະເດັດມາໃນ
ຄວາມສົມບູນແຫ່ງວັນເວລາຂອງພຣະອົງ.
8 ແລະ ບັດນີ້ຂ້າພະເຈົ້າຂຽນຄຳເວົ້າ
ຂອງເອຊາຢາໄວ້ບາງຄຳສຳລັບຜູ້ໃດຜູ້ໜຶ່ງ
ໃນຜູ້ຄົນຂອງຂ້າພະເຈົ້າ ຈະເຫັນຄຳເວົ້າ
ເຫລົ່ານີ້ ຈະໄດ້ມີກຳລັງໃຈ ແລະ ປິຕິຍິນ
ດີເພື່ອມະນຸດທຸກຄົນ. ແລ້ວນີ້ຄືຂໍ້ຄວາມ
ແລະ ທ່ານຈະໄດ້ປຽບທຽບມັນກັບຕົວທ່ານ
ເອງ ແລະ ກັບມະນຸດທັງປວງ.

## ບົດທີ 12

*ເອຊາຢາເຫັນພຣະວິຫານໃນຍຸກສຸດທ້າຍ,
ການເຕົ້າໂຮມຂອງອິດສະຣາເອນ, ການ
ພິພາກສາໃນພັນປີ ແລະ ສັນຕິສຸກ—ຄົນ
ອວດດີກັບຄົນຊົ່ວຈະຖືກນຳລົງຕ່ຳໃນ
ການສະເດັດມາຄັ້ງທີສອງ—ປຽບທຽບກັບ
ເອຊາຢາ 2. ປະມານ 559–545 ປີ ກ່ອນ
ຄ.ສ.*

1 ຄຳເວົ້າທີ່ [ກ]ເອຊາຢາຊຶ່ງເປັນລູກຊາຍ
ຂອງອາໂມດ [ຂ]ໄດ້ເຫັນກ່ຽວກັບຢູດາ ແລະ

3 *ກ* 2 ນຟ 2:3;
ຢຄ 7:5.
*ຂ* 2 ນຟ 27:12;
ອທ 5:2–4;
ຄພ 5:11.
4 *ກ* 2 ນຟ 31:2.
*ຂ* ຢຄ 4:5; ຈຣ 1:11;
ແອວ 25:15–16;
ອທ 12:19.
*ຄ* 2 ນຟ 5:10.
5 *ກ* ຄມພ ພັນທະສັນຍາ
ຂອງອັບຣາຮາມ.
6 *ກ* ມຊຢ 3:15.
7 *ກ* 2 ນຟ 2:13.
*ຂ* ຄມພ ສ້າງ, ການສ້າງ.
**12** 1 *ກ* ເອຊາຢາ ບົດທີ 2–14
ຖືກອ້າງເຖິງ ຈາກແຜ່ນ
ຈາລຶກທອງເຫລືອງ
ໂດຍນີໄຟ ໃນ 2 ນີໄຟ
12–24; ມີບາງຄຳທີ່ແຕກ
ຕ່າງ ຊຶ່ງຄວນສັງເກດ.
*ຂ* ເຮັບເຣີ *ຄາຊາ,* ໝາຍ
ເຖິງ “ນຶກເຫັນພາບ.”
ໝາຍຄວາມວ່າ ເອຊາ
ຢາ ໄດ້ຮັບຂ່າວສານຂອງ
ເພິ່ນ ຜ່ານທາງພາບນິມິດ
ຈາກພຣະຜູ້ເປັນເຈົ້າ.

ເຢຣູຊາເລັມ.
2 ແລະ ເຫດການຈະບັງເກີດຂຶ້ນໃນຍຸກ
ສຸດທ້າຍ, ເມື່ອຈະມີ [ກ]ພູທີ່ເປັນບ່ອນຕັ້ງ
[ຂ]ພຣະວິຫານຂອງພຣະຜູ້ເປັນເຈົ້າຈະຖືກ
ສະຖາປະນາຂຶ້ນເທິງຈອມ [ຄ]ພູທັງຫລາຍ
ຊຶ່ງມັນຈະສູງກວ່າເນີນພູທຸກໆໜ່ວຍ ແລະ
ປະຊາຊາດທັງປວງຈະຫລັ່ງໄຫລໄປບ່ອນ
ນັ້ນ.
3 ແລະ ຜູ້ຄົນຈຳນວນຫລວງຫລາຍຈະ
ໄປ ແລະ ເວົ້າວ່າ ມາເຖີດພວກທ່ານ, ໃຫ້
ພວກເຮົາຂຶ້ນໄປຍັງພູເຂົາຂອງພຣະຜູ້ເປັນ
ເຈົ້າເທາະ ໄປຫາພຣະວິຫານຂອງພຣະ
ເຈົ້າຂອງຢາໂຄບ ແລະ ພຣະອົງຈະສິດ
ສອນພວກເຮົາເຖິງທາງຂອງພຣະອົງ ແລະ
ພວກເຮົາຈະ [ກ]ເດີນຕາມທາງຂອງພຣະອົງ;
ເພາະ [ຂ]ກົດຈະອອກມາຈາກຊີໂອນ, ແລະ
ພຣະຄຳຂອງພຣະຜູ້ເປັນເຈົ້າຈະອອກມາ
ຈາກເຢຣູຊາເລັມ.
4 ແລະ ພຣະອົງຈະ [ກ]ພິພາກສາໃນບັນ
ດາປະຊາຊາດ ແລະ ຈະຕິຕຽນຜູ້ຄົນຢ່າງ
ຫລວງຫລາຍ ແລະ ພວກເຂົາຈະຕີດາບ
ຂອງພວກເຂົາໃຫ້ເປັນໝາກສົບໄຖ, ແລະ
ຕີຫອກຂອງພວກເຂົາໃຫ້ເປັນກ່ຽວ—ປະ
ຊາຊາດຈະບໍ່ຍົກດາບຕໍ່ສູ້ກັນ, ທັງພວກ
ເຂົາຈະບໍ່ຮຽນເລື່ອງສົງຄາມອີກຕໍ່ໄປ.
5 ໂອ້ ເຊື້ອສາຍຂອງຢາໂຄບ, ຈົ່ງມາເຖີດ
ພວກທ່ານເອີຍ ແລະ ໃຫ້ພວກເຮົາເດີນໄປ
ໃນຄວາມສະຫວ່າງຂອງພຣະຜູ້ເປັນເຈົ້າ;
ແທ້ຈິງແລ້ວ, ຈົ່ງມາເຖີດ, ເພາະທ່ານທັງ
ຫລາຍ [ກ]ຫລົງທາງໄປ, ທຸກຄົນໄປຕາມທາງ
ຊົ່ວຮ້າຍຂອງຕົນ.
6 ສະ ນັ້ນ, ໂອ້ ພຣະຜູ້ເປັນເຈົ້າ, ພຣະ
ອົງໄດ້ປະຖິ້ມຜູ້ຄົນຂອງພຣະອົງ, ຜູ້ເປັນ
ເຊື້ອສາຍຂອງຢາໂຄບເສຍແລ້ວ, ເພາະ
ພວກເຂົາໄດ້ [ກ]ພາມາທາງຕາເວັນອອກ,
ແລະ ເຊື່ອຟັງຄຳໝໍດູຄືກັນກັບ [ຂ]ຊາວຟີລິດ
ສະຕິນ, ແລະ ພວກເຂົາສ້າງ [ຄ]ຄວາມພໍໃຈ
ກັບຄົນແປກໜ້າ.
7 ແຜ່ນດິນຂອງພວກເຂົາເຕັມໄປດ້ວຍ
ເງິນ ແລະ ຄຳ, ທັງຊັບສົມບັດຂອງພວກ
ເຂົາຢ່າງລົ້ນເຫລືອ; ແຜ່ນດິນຂອງພວກ
ເຂົາເຕັມໄປດ້ວຍມ້າ, ທັງລົດມ້າຂອງພວກ
ເຂົາຢ່າງລົ້ນເຫລືອ.
8 ແຜ່ນດິນຂອງພວກເຂົາເຕັມໄປດ້ວຍ
[ກ]ຮູບບູຊາ; ພວກເຂົາກາບໄຫວ້ສິ່ງທີ່ເຮັດ
ຂຶ້ນດ້ວຍມືຂອງຕົນເອງ ຊຶ່ງແມ່ນນິ້ວມືຂອງ
ພວກເຂົາເຮັດຂຶ້ນ.
9 ແລະ ຄົນຕ່ຳຊ້າບໍ່ກົ້ມຫົວ [ກ]ລົງ ແລະ
ຄົນສູງສົ່ງບໍ່ຖ່ອມຕົວ, ສະນັ້ນ ຢ່າໃຫ້ອະໄພ
ພວກເຂົາເລີຍ.
10 ໂອ້ ເຈົ້າຜູ້ຊົ່ວຮ້າຍ, ຈົ່ງເຂົ້າໄປໃນ
ຫລືບຫີນ ແລະ [ກ]ລີ້ຊ່ອນຕົວຢູ່ໃນຂີ້ຝຸ່ນ,
ເພາະຄວາມຢ້ານກົວພຣະຜູ້ເປັນເຈົ້າ ແລະ
ລັດສະໝີພາບແຫ່ງເດຊານຸພາບຂອງພຣະ
ອົງຈະລົງທັບເຈົ້າ.
11 ແລະ ເຫດການຈະບັງເກີດຂຶ້ນຄື
ຄວາມທະນົງຕົວຂອງມະນຸດຈະຖືກເຮັດ
ໃຫ້ອ່ອນນ້ອມລົງ, ແລະ ຄວາມຈອງຫອງ

2 ກ ຢອ 3:17.
ຄມພ ຊີໂອນ.
ຂ ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
ຄ ຄພ 49:25.
3 ກ ຄມພ ເດີນ, ເດີນໄປກັບພຣະເຈົ້າ.
ຂ ເຮັບເຣີ ການສອນ, ຫລື ຄຳສອນ.
ຄມພ ພຣະກິດຕິຄຸນ.
4 ກ 2 ນຟ 21:2–9.
5 ກ 2 ນຟ 28:14;
ມຊຢ 14:6;
ແອວ 5:37.
6 ກ ອສ ເຕັມໄປດ້ວຍ, ຖືກສິດສອນ, ຄວາມເຊື່ອທີ່ປ່າເຖື່ອນ.
ພສສ 106:35.
ຂ ຄມພ ຟີລິດສະຕິນ.
ຄ ເຮັບເຣີ ສະໜັບສະໜູນ, ຫລື ເຮັດພັນທະສັນຍານຳ.
8 ກ ຄມພ ການນັບຖືຮູບບູຊາ.
9 ກ ອສ ແກ່ພຣະເຈົ້າ; ເຂົານະມັດສະການຮູບບູຊາແທນ.
10 ກ ແອວ 12:14.

ຈະຖືກປາບ, ໃນມື້ນັ້ນພຣະຜູ້ເປັນເຈົ້າອົງ
ດຽວຈະສູງສົ່ງ.
12 ເພາະ [ກ]ວັນຂອງຈອມໂຍທາຈະມາ
ເຖິງປະຊາຊາດທັງປວງໃນບໍ່ຊ້າ, ແທ້ຈິງ
ແລ້ວ, ເຖິງຄົນທຸກຄົນ; ແທ້ຈິງແລ້ວ, ເຖິງ
[ຂ]ຄົນຈອງຫອງ ແລະ ຄົນຫຍິ່ງຍະໂສ, ແລະ
ເຖິງຄົນທີ່ຍົກຕົວຂຶ້ນ, ແລະ ພວກເຂົາຈະ
ຖືກນຳລົງຕ່ຳ.
13 ແທ້ຈິງແລ້ວ, ແລະ ວັນຂອງພຣະຜູ້
ເປັນເຈົ້າຈະມາເຖິງຕົ້ນສົນສີດາທັງໝົດ
ຂອງເລບານອນ, ເພາະມັນສູງ ແລະ ຍົກ
ຕົວ; ແລະ ເຖິງຕົ້ນໂອກທັງໝົດຂອງບາ
ຊານ;
14 ແລະ ເຖິງພູເຂົາສູງທັງໝົດ, ແລະ
ເຖິງເນີນພູທັງໝົດ, ແລະ ເຖິງປະຊາຊາດ
ທັງປວງທີ່ຍົກຕົວຂຶ້ນ ແລະ ເຖິງມະນຸດທຸກ
ຄົນ.
15 ແລະ ເຖິງຫໍສູງທຸກຫໍ, ແລະ ເຖິງກຳ
ແພງທີ່ມີສິ່ງກີດຂວາງທຸກແຫ່ງ;
16 ແລະ ເຖິງເຮືອທັງໝົດໃນ [ກ]ທະເລ
ແລະ ເຖິງເຮືອທັງໝົດຂອງທາຣາຊິດ,
ແລະ ເຖິງຮູບທີ່ໜ້າຊົມທັງໝົດ.
17 ແລະ ຄວາມທະນົງຕົວຂອງມະນຸດ
ຈະຖືກປາບລົງ, ແລະ ຄວາມຈອງຫອງ
ຂອງມະນຸດຈະຖືກເຮັດໃຫ້ຕ່ຳລົງ; ແລະ
ໃນມື້ [ກ]ນັ້ນພຣະຜູ້ເປັນເຈົ້າອົງດຽວຈະສູງ
ສົ່ງ.
18 ແລະ ພຣະອົງຈະລົບລ້າງຮູບບູຊາທັງ
ໝົດ.
19 ແລະ ພວກເຂົາຈະເຂົ້າໄປໃນຫລືບ
ຫີນ ແລະ ໃນຖ້ຳຂອງແຜ່ນດິນໂລກ ເພາະ
ຄວາມຢ້ານກົວພຣະຜູ້ເປັນເຈົ້າ ຈະເກີດ
ກັບພວກເຂົາ ແລະ ລັດສະໝີພາບ ແຫ່ງ
ເດຊານຸພາບຂອງພຣະອົງຈະລົງທັນພວກ
ເຂົາ ເມື່ອພຣະອົງໄດ້ລຸກຂຶ້ນສັ່ນແຜ່ນດິນ
ໂລກຢ່າງຮ້າຍແຮງ.
20 ແລະ ໃນມື້ນັ້ນ ມະນຸດຜູ້ໜຶ່ງຈະ
[ກ]ໂຍນຮູບບູຊາຂອງພວກເຂົາທີ່ເຮັດດ້ວຍ
ເງິນ ແລະ ຮູບບູຊາຂອງພວກເຂົາທີ່ເຮັດ
ດ້ວຍຄຳ, ຊຶ່ງພວກເຂົາເຮັດຂຶ້ນ ເພື່ອຕົນ
ຈະໄດ້ກາບໄຫວ້ລົງໄປຢູ່ກັບຕົວຕຸ່ນກັບຕົວ
ເຈຍ.
21 ເພື່ອເຂົ້າໄປໃນຫລືບຫີນແຕກ ແລະ
ບ່ອນຫີນກະບຸກະບ່ຳ ເພາະຄວາມຢ້ານ
ກົວພຣະຜູ້ເປັນເຈົ້າ ຈະເກີດກັບພວກເຂົາ
ແລະ ເດຊານຸພາບແຫ່ງລັດສະໝີພາບ
ຂອງພຣະອົງຈະລົງທັນພວກເຂົາເວລາ
ພຣະອົງລຸກຂຶ້ນ ແລະ ສັ່ນແຜ່ນດິນໂລກ
ຢ່າງຮ້າຍແຮງ.
22 ທ່ານຈົ່ງ [ກ]ຕັດຂາດຈາກມະນຸດ, ຊຶ່ງ
ລົມຫາຍໃຈຂອງເຂົາຢູ່ໃນຮູດັງ; ເພາະຢູ່
ໃນນັ້ນບໍທີ່ເຂົາຈະໄດ້ຮັບການຍົກຍ້ອງ?

## ບົດທີ 13

*ຢູດາ ແລະ ເຢຣູຊາເລັມຈະຖືກລົງໂທດ ເພາະການບໍ່ເຊື່ອຟັງຂອງພວກເຂົາ—ພຣະຜູ້ເປັນເຈົ້າອ້ອນວອນເພື່ອ ແລະ ພິ*

12 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຂ ມລກ 4:1; 2 ນຟ 23:11; ຄພ 64:24.
16 ກ ພຣະຄຳພີເປັນພາສາກຣີກ (ແຊັບທູອາຈິ້ນ) ມີສຳນວນໜຶ່ງທີ່ພາສາເຮັບເຣີບໍ່ມີ, ແລະ ກໍມີສຳນວນໜຶ່ງໃນພາສາເຮັບເຣີ ທີ່ພາສາກຣີກບໍ່ມີ; ແຕ່ 2 ນຟ 12:16 ມີທັງສອງ. ພສສ 48:7; ອຊກ 27:25.
17 ກ ອສ ວັນແຫ່ງການສະເດັດມາຂອງພຣະຜູ້ເປັນເຈົ້າໃນລັດສະໝີພາບ.
20 ກ ເຮັບເຣີ ໂຍນຖິ້ມ.
22 ກ ອສ ເຊົາເພິ່ງອາໄສມະນຸດ; ເຂົາມີອຳນາດພຽງເລັກນ້ອຍເມື່ອປຽບທຽບໃສ່ກັບພຣະເຈົ້າ. ມຊ 1:10.

*ພາກ ສາ ຜູ້ ຄົນ ຂອງ ພຣະ ອົງ—ທິດາ ຂອງ ຊີໂອນຖືກສາບແຊ່ງ ແລະ ທໍລະມານເພາະ ຄວາມ ເປັນຢູ່ທາງ ໂລກຂອງພວກ ເຂົາ— ປຽບທຽບກັບເອຊາຢາ 3. ປະມານ 559–545 ປີ ກ່ອນ ຄ.ສ.*

1 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າ, ຈອມ
ໂຍທາ ຈະ ເອົາ ສິ່ງທີ່ຄ້ຳຈູນຊີວິດເຊັ່ນ,
ອາຫານທັງໝົດ ແລະ ນ້ຳທີ່ມີທັງໝົດອອກ
ຈາກເຢຣູຊາເລັມ ແລະ ຈາກຢູດາ—
2 ຜູ້ຍິ່ງໃຫຍ່ ແລະ ນັກຮົບ, ຜູ້ຕັດສິນ,
ແລະ ສາດສະດາ, ຜູ້ທຳນາຍ, ແລະ ຜູ້ອາ
ວຸໂສ;
3 ຜູ້ບັງຄັບຫ້າສິບຄົນ, ແລະ ຜູ້ທີ່ມີກຽດ,
ຜູ້ປຶກສາ, ແລະ ຜູ້ມີເລ່ຫລ່ຽມທີ່ມີຝີມືດີ,
ແລະ ນັກເວົ້າທີ່ມີໂວຫານ.
4 ແລະ ເຮົາຈະກະທຳໃຫ້ເດັກນ້ອຍເປັນ
ເຈົ້າຊາຍຂອງພວກເຂົາ, ແລະ ເດັກເກີດ
ໃໝ່ຈະປົກຄອງພວກເຂົາ.
5 ແລະ ທຸກຄົນຈະຖືກຂົ່ມເຫັງໂດຍພວກ
ກັນເອງ, ແລະ ໂດຍເພື່ອນບ້ານຂອງຕົນ;
ເດັກນ້ອຍຈະປະພຶດອວດດີຕໍ່ຜູ້ອາວຸໂສ,
ແລະ ຄົນຊົ່ວຈະຕໍ່ຕ້ານຄົນມີກຽດ.
6 ເມື່ອຄົນຜູ້ໜຶ່ງຈະຍຶດຕົວພີ່ນ້ອງຂອງ
ເຂົາໄວ້ໃນເຮືອນຂອງບິດາຂອງເຂົາ, ແລະ
ຈະເວົ້າວ່າ: ເຈົ້າມີເສື້ອຜ້າແລ້ວ, ຂໍໃຫ້
ເຈົ້າເປັນຜູ້ນຳຂອງເຮົາເຖີດ, ແລະ ຢ່າໃຫ້
[ກ]ຄວາມຫາຍຍະນະເກີດຈາກມືຂອງເຈົ້າ—
7 ໃນມື້ນັ້ນເຂົາຈະຄັດຄ້ານໂດຍກ່າວວ່າ:
ເຮົາຈະບໍ່ເປັນ [ກ]ຜູ້ປິ່ນປົວເພາະວ່າໃນເຮືອນ
ຂອງເຮົາບໍ່ມີອາຫານ ຫລື ເຄື່ອງນຸ່ງຫົ່ມ; ຢ່າ
ເຮັດໃຫ້ເຮົາເປັນຜູ້ປົກຄອງຜູ້ຄົນເລີຍ.
8 ເພາະເຢຣູຊາເລັມ [ກ]ພິນາດແລ້ວ, ແລະ
ຢູດາກໍ [ຂ]ຕົກແລ້ວ, ເພາະວາຈາຂອງພວກ
ເຂົາ ແລະ ການກະທຳຂອງພວກເຂົາທີ່ຕໍ່
ຕ້ານພຣະຜູ້ເປັນເຈົ້າ, ເຮັດໃຫ້ຂຸ່ນເຄືອງ
ພຣະເນດແຫ່ງລັດສະໝີພາບຂອງພຣະ
ອົງ.
9 ການສະແດງສີໜ້າຂອງພວກເຂົາເປັນ
ພະຍານກ່າວໂທດພວກເຂົາ, ແລະ ປະ
ກາດບາບຂອງພວກເຂົາເປັນຄືກັນກັບ
[ກ]ໂຊໂດມ, ແລະ ພວກເຂົາຈະລີ້ຊ່ອນບໍ່ໄດ້.
ວິບັດແກ່ຈິດວິນຍານຂອງພວກເຂົາ, ເພາະ
ພວກເຂົາໃຫ້ລາງວັນຄວາມຊົ່ວແກ່ຕົວ!
10 ຈົ່ງເວົ້າກັບຄົນຊອບທຳວ່າ ເຂົາທັງ
ຫລາຍຈະ [ກ]ເປັນສຸກ; ເພາະພວກເຂົາຈະ
ໄດ້ຮັບຜົນຂອງການກະທຳຂອງພວກເຂົາ
ເອງ.
11 ວິບັດແກ່ຄົນຊົ່ວ ເພາະເຂົາຈະຕາຍ;
ເພາະລາງວັນຈາກມືຂອງເຂົາຈະມາສູ່ເຂົາ!
12 ແລະ ຜູ້ຄົນຂອງເຮົາ, ເດັກນ້ອຍ
ເປັນຜູ້ຂົ່ມເຫັງພວກເຂົາ, ແລະ ຜູ້ຍິງປົກ
ຄອງພວກເຂົາ. ໂອ້ ຜູ້ຄົນຂອງເຮົາ, ເຂົາທີ່
ຈະ [ກ]ນຳພາເຈົ້າເປັນເຫດໃຫ້ເຈົ້າຫລົງຜິດ
ແລະ ທຳລາຍທາງເດີນຂອງເຈົ້າ.
13 ພຣະຜູ້ເປັນເຈົ້າຢືນຂຶ້ນເພື່ອ
[ກ]ສາບານ ແລະ ຢືນຂຶ້ນເພື່ອພິພາກສາຜູ້
ຄົນ.
14 ພຣະຜູ້ເປັນເຈົ້າຈະເຂົ້າມາໃນການ
ພິພາກສາພ້ອມດ້ວຍຜູ້ອາວຸໂສຂອງຜູ້ຄົນ
ຂອງພຣະອົງ ແລະ [ກ]ເຈົ້າຊາຍຂອງພວກ
ນັ້ນ; ເພາະເຈົ້າໄດ້ [ຂ]ກິນ [ຄ]ສວນອະງຸ່ນເຂົ້າ

**13** 6 *ກ* ອຊຢ 3:6.
7 *ກ* ເຮັບເຣີ ພັນ (ບາດແຜ); ຍົກຕົວຢ່າງ, ເຮົາບໍ່ສາມາດແກ້ໄຂບັນຫາຂອງເຈົ້າ.
8 *ກ* ຢມຢ 9:11.
*ຂ* ພຄຄ 1:3.
9 *ກ* ປຖກ 19:1, 4–7, 24–25. ຄມພ ການຮ່ວມເພດກັບເພດດຽວກັນ.
10 *ກ* ພບຍ 12:28.
12 *ກ* ອຊຢ 9:16.
13 *ກ* ເຮັບເຣີ ໂຕ້ຖຽງ. ມກ 6:2; ຄພ 45:3–5.
14 *ກ* ເຮັບເຣີ ຜູ້ປົກຄອງ, ຫລື ຜູ້ນຳ.
*ຂ* ເຮັບເຣີ ຖືກທຳລາຍ, ຫລື ຖືກເຜົາໄໝ້.
*ຄ* ອຊຢ 5:7.

ໄປ ແລະ [ງ]ຂອງທີ່ປຸ້ນມາຈາກ [ຈ]ຄົນຍາກຈົນ
ກໍຢູ່ໃນບ້ານຂອງເຈົ້າ.
15 ເຈົ້າໝາຍຄວາມວ່າແນວໃດ? ເຈົ້າ
ຟາດຟັນຜູ້ຄົນຂອງເຮົາເປັນຕ່ອນໆ, ແລະ
ບົດໜ້າຂອງຄົນຍາກຈົນ, ອົງພຣະຜູ້ເປັນ
ເຈົ້າຈອມໂຍທາໄດ້ກ່າວ.
16 ຍິ່ງໄປກວ່ານັ້ນ, ພຣະຜູ້ເປັນເຈົ້າໄດ້
ກ່າວວ່າ: ຍ້ອນວ່າລູກສາວຂອງຊີໂອນ ຊຶ່ງ
ເປັນຄົນຈອງຫອງ, ແລະ ຍ່າງຍື່ນຄໍໄປທາງ
ໜ້າ ແລະ ເຮັດຕາຍົ້ວຍວນ, ຍ່າງໄປ ແລະ
[ກ]ເຮັດກະຕຸ້ງກະຕິ້ງ, ແລະ ເຮັດບາດຕີນດັງ
ຕິ້ງຕັ້ງ—
17 ສະນັ້ນ ພຣະຜູ້ເປັນເຈົ້າ ຈະລົງທັນ
ໃຫ້ກະໂຈມໃນຫົວຂອງລູກສາວຂອງ
ຊີໂອນເປັນເກີດ, ແລະ ພຣະຜູ້ເປັນເຈົ້າຈະ
[ກ]ພົບເຫັນສ່ວນລຶກລັບຂອງພວກເຂົາ.
18 ໃນມື້ນັ້ນ ພຣະຜູ້ເປັນເຈົ້າຈະເອົາ
ຄວາມກ້າຫານຂອງເຄື່ອງປະດັບທີ່ມີສຽງ
ຂອງພວກເຂົາ, ແລະ [ກ]ໝວກ, ແລະ [ຂ]ສາຍ
ຄໍຄືກັນກັບດວງເດືອນໄປ;
19 ສ້ອຍຄໍ ແລະ ສ້ອຍແຂນ, ແລະ [ກ]ຜ້າ
ຄຸມ;
20 ໝວກ, ແລະ ເຄື່ອງປະດັບຂາ, ແລະ
ຜ້າມັດຜົມ, ແລະ ແຜ່ນປະດັບ, ແລະ ຕຸ້ມຫູ;
21 ແຫວນ, ແລະ ເຄື່ອງເອ້ປະດັບດັງ;
22 [ກ]ເສື້ອຜ້າເປັນຊຸດທີ່ປ່ຽນຖ່າຍໄດ້,
ແລະ ເສື້ອຄຸມ, ແລະ ຜ້າປົກຫົວ, ແລະ ກິບ
ໜີບຜົມ;
23 [ກ]ແວ່ນ, ແລະ ຜ້າລີນິນເນື້ອດີ, ແລະ
ຜ້າຄຸມ, ແລະ ຜ້າປົກໜ້າ.
24 ແລະ ເຫດການໄດ້ບັງເກີດຂຶ້ນ, ແທນ
ກິ່ນຫອມຫວນຈະເປັນກິ່ນເໝັນ; ແທນຜ້າ
ຄຽນແອວຈະເປັນ [ກ]ຜ້າຂາດສ້ອຍ; ແລະ
ແທນຜົມຕົກແຕ່ງຢ່າງດີຈະເປັນຫົວລ້ານ;
ແທນ [ຂ]ຜ້າຄຸມທ້ອງຈະເປັນກະສອບຜ້າ;
[ຄ]ການເຜົາໄໝ້ແທນຄວາມສວຍງາມ.
25 ພວກຜູ້ຊາຍຂອງເຈົ້າຈະລົ້ມຕາຍ
ດ້ວຍດາບກັບຜູ້ຍິ່ງໃຫຍ່ຂອງເຈົ້າໃນສົງ
ຄາມ.
26 ແລະ ປະຕູຂອງນາງຈະຄໍ່າຄວນ
ແລະ ເປັນທຸກ; ແລະ ນາງຈະຢູ່ໂດດດ່ຽວ,
ແລະ ນັ່ງຢູ່ພື້ນດິນ.

## ບົດທີ 14

*ຊີໂອນ ແລະ ທິດາຂອງມັນຈະຖືກໄຖ່ ແລະ ເຮັດໃຫ້ສະອາດພາຍໃນພັນປີ—ປຽບທຽບກັບ ເອຊາຢາ 4. ປະມານ 559–545 ປີກ່ອນ ຄ.ສ.*

1 ແລະ ໃນມື້ນັ້ນ, ຜູ້ຍິງເຈັດຄົນຈະຍຶດ
ຜູ້ຊາຍຄົນດຽວໄວ້, ໂດຍກ່າວວ່າ: ພວກ
ເຮົາຈະກິນເຂົ້າຈີ່ຂອງພວກເຮົາເອງ, ແລະ
ນຸ່ງເສື້ອຜ້າຂອງພວກເຮົາເອງ; ຂໍພຽງແຕ່
ໃຫ້ພວກເຮົາໃຊ້ຊື່ຂອງທ່ານ ໃຫ້ພົ້ນຈາກ
[ກ]ຄວາມຕິຕຽນເຖີດ.
2 ໃນມື້ນັ້ນ [ກ]ກິ່ງງ່າຂອງພຣະຜູ້ເປັນເຈົ້າ

14 *ງ* ອສ ຂອງທີ່ລັກມາ.
*ຈ* 2 ນຟ 28:12–13.
16 *ກ* ອສ ຍ່າງດ້ວຍບາດກ້າວສູສີກັນໄປ, ຍ່າງໄວໆໃນແບບດັດຈະລິດ.
17 *ກ* ເຮັບເຣີ ເປີດເຜີຍ; ໝາຍເຖິງ “ເຮັດໃຫ້ເຂົາອັບອາຍ.”
18 *ກ* ອາດເປັນດາງງວມຜົມ. ຜູ້ນໍາມັກບໍ່ເຫັນດ້ວຍກັບເຄື່ອງປະດັບຂອງຜູ້ຍິງ ຊຶ່ງກ່າວເຖິງຢູ່ໃນ ຂໍ້ທີ 18–23.
*ຂ* ອສ ເຄື່ອງປະດັບທີ່ມີຮູບລັກສະນະຄືເດືອນອອກໃໝ່.
19 *ກ* ເຮັບເຣີ ຜ້າຄຸມໜ້າ.
22 *ກ* ເຮັບເຣີ ເສື້ອຜ້າທີ່ສວຍສົດງົດງາມ.
23 *ກ* ພ ເສື້ອຜ້າທີ່ສວຍສົດງົດງາມ.
24 *ກ* ເຮັບເຣີ ຜ້າຂີ້ລິ້ວ.
*ຂ* ພ ເສື້ອຄຸມ.
*ຄ* ພ ການຕີກາດ້ວຍເຫລັກເຜົາ (ເຄື່ອງໝາຍຂອງການເປັນຂ້າທາດ).
**14** 1 *ກ* ອສ ມົນທິນຂອງການບໍ່ແຕ່ງງານ ແລະ ບໍ່ມີລູກ.
2 *ກ* ອຊຢ 60:21; 2 ນຟ 3:5; ຢຄ 2:25.

ຈະສວຍງາມ ແລະ ຮຸ່ງເຫລື້ອມ; ໝາກຜົນ
ຂອງແຜ່ນດິນໂລກຈະດີເລີດ ແລະ ໜ້າຊື່ນ
ຊົມ ແກ່ຊາວອິດສະຣາເອນຜູ້ໜີລອດມາ
ໄດ້.
3 ແລະ ເຫດການຈະບັງເກີດຂຶ້ນຄື, ຜູ້
ທີ່ ເຫລືອຢູ່ໃນຊີໂອນ ແລະ ຄ້າງຢູ່ເຢຣູ
ຊາເລັມ ຈະຖືກເອີ້ນວ່າຜູ້ບໍລິສຸດ, ທຸກຄົນ
ຈະຖືກບັນທຶກໄວ້ໃນບັນດາຜູ້ມີຊີວິດໃນ
ເຢຣູຊາເລັມ—
4 [ກ]ເມື່ອນັ້ນ ພຣະຜູ້ເປັນເຈົ້າຈະ [ຂ]ລ້າງ
ຄວາມສົກກະ ປົກອອກຈາກທິດາຂອງ
ຊີໂອນ, ແລະ ຈະຊໍາລະເລືອດຂອງເຢຣູ
ຊາເລັມຈາກທ່າມກາງພວກນັ້ນໂດຍວິນ
ຍານແຫ່ງການພິພາກສາ ແລະ ໂດຍວິນ
ຍານແຫ່ງ [ຄ]ການເຜົາໄໝ້.
5 ແລະ ພຣະຜູ້ເປັນເຈົ້າຈະສ້າງເມກ
ແລະ [ກ]ຄວັນເພື່ອຕອນກາງເວັນ ແລະ ແສງ
ຂອງແປວໄຟ ເພື່ອຕອນກາງຄືນຢູ່ເໜືອທີ່
ອາໄສທຸກແຫ່ງຂອງພູຊີໂອນ, ແລະ ຢູ່ເໜືອ
ບ່ອນຊຸມນຸມເມືອງນັ້ນ; ເພາະຈະມີການ
ປ້ອງກັນ ເໜືອລັດສະໝີພາບທັງມວນຂອງ
ຊີໂອນ.
6 ແລະ ຈະມີສະຖານທີ່ນະມັດສະການ
ເປັນຮົ່ມບັງແດດໃນຕອນກາງເວັນ, ແລະ
ເປັນ [ກ]ບ່ອນລີ້ໄພ, ແລະ ເປັນບ່ອນກໍາບັງ
ພະຍຸ ແລະ ຝົນ.

## ບົດທີ 15

*ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ (ອິດສະຣາເອນ) ຈະເປົ່າແປນ, ແລະ ຜູ້ຄົນຂອງພຣະອົງຈະກະຈັດກະຈາຍໄປ—ວິບັດຈະມາເຖິງພວກເຂົາໃນສະພາບທີ່ຫລົງຜິດ ແລະ ການກະຈັດກະຈາຍໄປຂອງພວກເຂົາ—ພຣະຜູ້ເປັນເຈົ້າຈະຍົກເຄື່ອງສັນຍານຂຶ້ນ ແລະ ເຕົ້າໂຮມອິດສະຣາເອນ—ປຽບທຽບກັບເອຊາຢາ 5. ປະມານ 559–545 ປີກ່ອນ ຄ.ສ.*

1 ແລະ ຈາກນັ້ນຂ້າພະເຈົ້າຈະຮ້ອງເພງ
ເຖິງເພື່ອນທີ່ຮັກແພງຂອງຂ້າພະເຈົ້າ, ຊຶ່ງ
ເປັນ [ກ]ເພງຂອງທີ່ຮັກຂອງຂ້າພະເຈົ້າກ່ຽວ
ກັບສວນອະງຸ່ນຂອງພຣະອົງ. ທີ່ຮັກຂອງ
ຂ້າພະເຈົ້າມີສວນອະງຸ່ນຢູ່ແປງໜຶ່ງໃນເນີນ
ພູທີ່ອຸດົມສົມບູນດ້ວຍໝາກຜົນ.
2 ແລະ ພຣະອົງໄດ້ລ້ອມຮົ້ວໃຫ້ມັນ,
ແລະ ເກັບຫີນໃນນັ້ນອອກ, ແລະ ປູກ
[ກ]ແນວອະງຸ່ນພັນດີທີ່ສຸດ, ແລະ ສ້າງຫໍສູງ
ໄວ້ກາງສວນ, ແລະ ເຮັດເຄື່ອງປັ່ນໝາກ
ອະງຸ່ນໃນນັ້ນອີກ; ແລະ ພຣະອົງຫວັງວ່າ
ມັນຈະໄດ້ໝາກອະງຸ່ນດີ, ແຕ່ໄດ້ຮັບໝາກ
ອະງຸ່ນປ່າ.
3 ແລະ ບັດນີ້, ໂອ້ ຜູ້ອາໄສຂອງເຢຣູ
ຊາເລັມ, ແລະ ຜູ້ຄົນຂອງຢູດາ, ເຮົາຂໍໃຫ້
ເຈົ້າຕັດສິນລະຫວ່າງເຮົາກັບສວນອະງຸ່ນ
ຂອງເຮົາ.
4 ແລະ ຍັງມີອັນໃດອີກແດ່ ທີ່ເຮົາຍັງບໍ່
ໄດ້ເຮັດໃນສວນນີ້? ດັ່ງນັ້ນ, ເມື່ອເຮົາຫວັງ
ວ່າຈະໄດ້ໝາກອະງຸ່ນ, ແຕ່ໄດ້ຮັບໝາກ
ອະງຸ່ນສົ້ມໝົດ.

---

4 *ກ* ອສ ເມື່ອພຣະຜູ້ເປັນເຈົ້າໄດ້ຊໍາລະລ້າງແຜ່ນດິນໂລກ.
*ຂ* ຄມພ ຊໍາລະລ້າງ, ຖືກຊໍາລະລ້າງ, ການຊໍາລະລ້າງ.
*ຄ* ມລກ 3:2–3; 4:1.
5 *ກ* ອພຍ 13:21.
6 *ກ* ອຊຢ 25:4; ຄພ 115:6.
**15** 1 *ກ* ອສ ສາດສະດາແຕ່ງເພງ ຫລື ແຕ່ງກາບກອນ ເປັນຄໍາອຸປະມາກ່ຽວກັບສວນອະງຸ່ນ, ສະແດງໃຫ້ເຫັນເຖິງຄວາມເມດຕາຂອງພຣະເຈົ້າ ແລະ ເຖິງຄວາມບໍ່ໄຫວຕິງຂອງຊາວອິດສະຣາເອນ.
2 *ກ* ຢມຢ 2:21.

5 ແລະ ບັດນີ້ໄປເຖີດ; ເຮົາຈະບອກເຈົ້າ
ວ່າ ເຮົາຈະເຮັດແນວໃດ ກັບສວນອະງຸ່ນ
ຂອງເຮົາ— ເຮົາຈະ [ກ]ມ້າງຮົ້ວ ຂອງມັນ
ອອກ, ແລະ ມັນກໍຈະຖືກກິນໝົດ; ແລະ
ເຮົາຈະມ້າງກຳແພງຂອງມັນອອກ, ແລະ
ມັນກໍຈະຖືກຢຽບຢ່ຳລົງ;
6 ແລະ ເຮົາຈະປ່ອຍໃຫ້ຫຍ້າເກີດເຕັມ
ໄປທົ່ວ, ແລະ ກິ່ງງ່າຂອງມັນຈະບໍ່ຖືກລິ
ອອກ ແລະ ດິນຈະບໍ່ຖືກພວນ; ແຕ່ຈະມີ
[ກ]ເຄືອ ແລະ ກົກໜາມຂຶ້ນມາ; ເຮົາຈະສັ່ງ
ເມກບໍ່ໃຫ້ [ຂ]ຝົນຕົກລົງມາຮຳສວນນີ້.
7 ເພາະ [ກ]ສວນອະງຸ່ນຂອງຈອມໂຍທາ
ນັ້ນຄືເຊື້ອສາຍອິດສະຣາເອນ, ແລະ ຄົນ
ຂອງຢູດາຄືໄມ້ພັນດີຂອງພຣະອົງ; ແລະ
ພຣະອົງຈະລໍຄອຍ [ຂ]ການພິພາກສາ, ແລະ
ຈົ່ງເບິ່ງ, ການຂົ່ມເຫັງຄວາມຊອບທຳ; ແຕ່
ຈົ່ງເບິ່ງ, ສຽງຮ້ອງໄຫ້.
8 ວິບັດແກ່ຜູ້ທີ່ເສີມ [ກ]ເຮືອນຫລັງໜຶ່ງເຂົ້າ
ກັບເຮືອນອີກຫລັງໜຶ່ງ, ຈົນວ່າບໍ່ມີບ່ອນ
ວ່າງເປົ່າ, ຊຶ່ງພວກເຂົາຈະໄດ້ [ຂ]ຢູ່ໂດຍລຳ
ພັງໃນທ່າມກາງຂອງແຜ່ນດິນນັ້ນ!
9 ຈອມໂຍທາໄດ້ກ່າວໃຫ້ຂ້າພະເຈົ້າໄດ້
ຍິນວ່າ, ເປັນຄວາມຈິງທີ່ບ້ານເຮືອນຫລາຍ
ຫລັງຈະຕ້ອງຮ້າງເປົ່າ, ແລະ ບ້ານໃຫຍ່
ເມືອງງາມຈະປາດສະຈາກຜູ້ອາໄສຢູ່.
10 ແທ້ຈິງແລ້ວ, ສວນອະງຸ່ນສິບເອເຄີ
ຈະໃຫ້ຜົນເທົ່າກັບໜຶ່ງ [ກ]ບັດ, ແລະ ເມັດພືດ
ໜຶ່ງໂຮເມີ ຈະມີຄ່າແຕ່ໜຶ່ງເອຟາ.
11 ວິບັດແກ່ຜູ້ຄົນທີ່ຕື່ນເຊົ້າ ເພື່ອ [ກ]ເລີ່ມ
ຕົ້ນດື່ມຂອງມຶນເມົາ, ແລະ ດື່ມຕໍ່ໄປຈົນ
ເຖິງຕອນກາງຄືນ, ເພາະ [ຂ]ເຫລົ້າອະງຸ່ນຈະ
ເຮັດໃຫ້ພວກເຂົາມຶນເມົາ!
12 ແລະ ພິນ, ແລະ ຊໍ, ກອງ, ແລະ ປີ່,
ແລະ ເຫລົ້າອະງຸ່ນໃນງານລ້ຽງພວກເຂົາ;
ແຕ່ພວກເຂົາບໍ່ໄດ້ [ກ]ເອົາໃຈໃສ່ວຽກງານ
ຂອງພຣະຜູ້ເປັນເຈົ້າເລີຍ, ທັງບໍ່ພິຈາລະ
ນາການກະທຳຈາກພຣະຫັດຂອງພຣະອົງ
ອີກ.
13 ສະນັ້ນ, ຜູ້ຄົນຂອງເຮົາຈຶ່ງໄປຫາການ
ເປັນຊະເລີຍເພາະພວກເຂົາບໍ່ມີ [ກ]ຄວາມຮູ້;
ແລະ ຜູ້ມີກຽດຂອງພວກເຂົາກໍຫິວໂຫຍ,
ແລະ ຝູງຊົນຂອງພວກເຂົາຫ່ຽວແຫ້ງໄປ
ດ້ວຍຄວາມຫິວກະຫາຍ.
14 ສະນັ້ນ, ນະລົກຈຶ່ງຂະຫຍາຍຕົວຂອງ
ມັນອອກ, ແລະ ເປີດປາກຂອງມັນອອກ
ກວ້າງຈົນແທກບໍ່ໄດ້; ແລະ ລັດສະໝີພາບ
ຂອງພວກເຂົາ, ແລະ ຝູງຊົນຂອງພວກ
ເຂົາ, ແລະ ຄວາມວາງທ່າຂອງພວກເຂົາ,
ແລະ ຜູ້ທີ່ປິຕິຍິນດີຈະລົງໄປຫານະລົກນັ້ນ.
15 ແລະ ຄົນຕ່ຳຊ້າຈະຖືກນຳລົງໄປ,
ແລະ ຄົນໃຫຍ່ໂຕຈະອ່ອນນ້ອມ, ແລະ
ສາຍຕາຂອງຄົນທະນົງຕົວ ຈະອ່ອນໂຍນ.
16 ແລະ ຈອມໂຍທາຈະສູງສົ່ງໃນ [ກ]ການ
ພິພາກສາ, ແລະ ພຣະເຈົ້າທີ່ບໍລິສຸດຈະຖືກ
ເຮັດໃຫ້ສັກສິດໃນຄວາມຊອບທຳ.
17 ຈາກນັ້ນຝູງແກະຈະຫາກິນຕາມພາ
ສາຂອງມັນ, ແລະ ບ່ອນຮົກຮ້າງຂອງພວກ
ທີ່ອ້ວນພີຈະມີພວກທີ່ແປກໜ້າມາກິນນຳ.

---

5 *ກ* ພສສ 80:12.
6 *ກ* ອຊຢ 7:23; 32:13.
*ຂ* ຢມຢ 3:3.
7 *ກ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
*ຂ* ພ ຍຸດຕິທຳ, ຄວາມ ຍຸດຕິທຳ.
8 *ກ* ມກ 2:1–2.
*ຂ* ອສ ຖືກປະໃຫ້ຢູ່ ຕາມລຳພັງ. ເຈົ້າຂອງທີ່ ດິນຜູ້ຮັ່ງມີຈະຍຶດເອົາ ໄຮ່ນາຕອນເລັກນ້ອຍ ຂອງຄົນຍາກຈົນ.
10 *ກ* ອຊກ 45:10–11.
11 *ກ* ສພສ 23:30–32.
*ຂ* ຄມພ ພຣະວາຈາ ແຫ່ງປັນຍາ.
12 *ກ* ພສສ 28:5.
13 *ກ* ຣສອ 4:6. ຄມພ ຄວາມຮູ້.
16 *ກ* ຄມພ ພຣະເຢຊູ ຄຣິດ—ພິພາກສາ.

18 ວິບັດແກ່ຜູ້ທີ່ດຶງຄວາມຊົ່ວຮ້າຍດ້ວຍ
ເຊືອກແຫ່ງ [ກ]ຄວາມໂອ້ອວດ, ແລະ ດຶງ
ບາບ [ຂ]ຄືກັບວ່າ ດຶງເຊືອກແກ່ກວຽນ;
19 ຜູ້ກ່າວວ່າ: ໃຫ້ພຣະອົງ [ກ]ຮີບຮ້ອນ,
ໃຫ້ພຣະອົງເລັ່ງງານຂອງພຣະອົງ; ເພື່ອ
ເຮົາຈະໄດ້ [ຂ]ເຫັນ; ແລະ ຂໍໃຫ້ຄຳແນະນຳ
ຂອງພຣະຜູ້ບໍລິສຸດຂອງອິດສະຣາເອນ
ເຂົ້າມາໃກ້, ເພື່ອເຮົາຈະໄດ້ຮູ້.
20 ວິບັດແກ່ຜູ້ທີ່ [ກ]ເອີ້ນຄວາມຊົ່ວວ່າດີ,
ແລະ ຄວາມດີວ່າຊົ່ວ, ແລະ ເອີ້ນ [ຂ]ຄວາມ
ມືດວ່າແຈ້ງ, ແລະ ຄວາມແຈ້ງວ່າມືດ, ແລະ
ເອີ້ນຄວາມຂົມວ່າຫວານ, ແລະ ຄວາມ
ຫວານວ່າຂົມ!
21 ວິບັດແກ່ [ກ]ຄົນສະຫລາດໃນສາຍຕາ
ຂອງຕົນເອງ ແລະ ຄວາມສ້ຽມແຫລມໃນ
ສາຍຕາຂອງຕົນເອງ!
22 ວິບັດແກ່ຄົນໃຫຍ່ໂຕທີ່ດື່ມເຫລົ້າ
ອະງຸ່ນ, ແລະ ແກ່ຄົນແຂງແຮງທີ່ປະສົມ
ເຄື່ອງດື່ມແຮງ;
23 ຜູ້ທີ່ຮັບຮອງຄົນຊົ່ວເພື່ອລາງວັນ,
ແລະ [ກ]ເອົາຄວາມຊອບທຳຂອງຄົນຊອບ
ທຳໄປຈາກເຂົາ!
24 ສະນັ້ນ, ຄືກັນກັບ [ກ]ໄຟໄໝ້ [ຂ]ເຟືອງ
ເຂົ້າ, ແລະ ແປວໄຟລາມເລຍ [ຄ]ຂີ້ແກບ,
ຮາກຂອງມັນຈະຜຸອອກ, ແລະ ດອກຂອງ
ມັນຈະຊຸຫລົ່ນຄືກັນກັບຂີ້ຝຸ່ນ; ເພາະວ່າ
ພວກເຂົາໂຍນກົດຂອງຈອມໂຍທາຖິ້ມ,
ແລະ [ງ]ປະໝາດພຣະຄຳຂອງພຣະຜູ້ບໍລິ
ສຸດຂອງອິດສະຣາເອນ.
25 ສະນັ້ນ, [ກ]ພຣະພິໂລດຂອງພຣະຜູ້
ເປັນເຈົ້າຈຶ່ງເກີດກັບຜູ້ຄົນຂອງພຣະອົງ,
ແລະ ພຣະອົງຈະເດ່ພຣະຫັດອອກໄປ ຕໍ່
ຕ້ານພວກເຂົາ, ແລະ ລົງທັນພວກເຂົາ;
ແລະ ເນີນພູໄດ້ສັ່ນສະເທືອນ, ແລະ ຊາກ
ສົບຂອງພວກເຂົາສີກຂາດຢູ່ກາງຖະໜົນ.
ເພາະທັງໝົດນີ້ພຣະພິໂລດຂອງພຣະອົງ
ຍັງບໍ່ເຊົາເທື່ອ, ແຕ່ພຣະຫັດຂອງພຣະອົງ
ຍັງຍື່ນອອກມາ.
26 ແລະ ພຣະອົງຈະຍົກ [ກ]ເຄື່ອງສັນຍານ
ໃຫ້ແກ່ປະຊາຊາດທີ່ຢູ່ຫ່າງໄກ, ແລະ ຈະ
[ຂ]ເປັ່ງສຽງເອີ້ນພວກເຂົາຈາກທີ່ສຸດຂອງ
ແຜ່ນດິນໂລກ; ແລະ ຈົ່ງເບິ່ງ, ພວກເຮົາຈະ
[ຄ]ມາດ້ວຍຄວາມຟ້າວຟັ່ງ; ບໍ່ມີຜູ້ໃດໃນບັນ
ດາພວກເຂົາຈະອິດເມື່ອຍ ແລະ ເຕະສະ
ດຸດ.
27 ບໍ່ມີຜູ້ໃດຈະເຫງົານອນ ຫລື ນອນ
ຫລັບ; ທັງຜ້າຄຽນແອວກໍບໍ່ຫລຸດ, ຫລື ສາຍ
ຮັດເກີບກໍບໍ່ຂາດ;
28 ລູກທະນູຂອງພວກເຂົາຈະແຫລມ,
ແລະ ຄັນທະນູທັງໝົດຈະກົ່ງ, ແລະ ເລັບ
ມ້າຂອງພວກເຂົາຈະຄືກັນກັບຫີນເຫລັກ
ໄຟ, ແລະ ລໍ້ລົດຂອງພວກເຂົາຈະຄືກັນກັບ

---

18 *ກ* ຄມພ ອວດອົ່ງ, ຄວາມອວດອົ່ງ.
*ຂ* ອສ ພວກເຂົາຖືກມັດໄວ້ຢູ່ກັບບາບກຳຂອງພວກເຂົາ ຄືກັນກັບສັດລາກແກ່ທີ່ຖືກຈ່ອງຈຳ.
19 *ກ* ຢມຢ 17:15.
*ຂ* ອສ ພວກເຂົາຈະບໍ່ເຊື່ອໃນພຣະເມຊີອາ ຈົນກວ່າພວກເຂົາເຫັນພຣະອົງ.
20 *ກ* ມຣນ 7:14, 18; ຄພ 64:16; 121:16.
*ຂ* 1 ຢຣ 1:6.
21 *ກ* ສພສ 3:5–7; 2 ນຟ 28:15.
23 *ກ* ອສ ຕັດເຂົາຈາກສິດທິທີ່ຖືກຕ້ອງຂອງເຂົາ.
24 *ກ* ອບຢ 1:18; ມລກ 4:1–2; 2 ນຟ 20:17.
*ຂ* ຢອ 2:5; 1 ນຟ 22:15, 23; 2 ນຟ 26:4, 6; ຄພ 64:23–24; 133:64.
*ຄ* ລກ 3:17; ມຊຢ 7:29–31.
*ງ* 2 ຊມອ 12:7–9.
25 *ກ* ຄພ 63:32; ມຊ 6:27.
26 *ກ* ຄມພ ປ້າຍສັນຍານ.
*ຂ* ພ ໝາກຫວິດ; ຍົກຕົວຢ່າງ, ເຄື່ອງໝາຍຂອງການເຕົ້າໂຮມ. ອຊຢ 7:18; 2 ນຟ 29:2.
*ຄ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.

ລົມໝຸນ, ແລະ ສຽງຂອງມັນຈະດັງກ້ອງຄື
ກັນກັບສຽງສິງ.
29 ມັນຈະດັງກ້ອງຄືກັນກັບ [ກ]ສິງໜຸ່ມ;
ແທ້ຈິງແລ້ວ, ມັນຈະດັງກ້ອງ, ແລະ ຄາບ
ເຫຍື່ອ, ແລະ ມັນຈະ ຂົນໄປ ເສຍດ້ວຍ
ຄວາມປອດໄພ, ແລະ ບໍ່ມີໃຜຍາດເອົາໄດ້.
30 ແລະ ໃນມື້ນັ້ນ, ມັນຈະສົ່ງສຽງດັງຕໍ່
ຕ້ານສັດຕູຄືກັນກັບສຽງດັງຂອງນ້ຳທະເລ;
ແລະ ຖ້າຫາກຜູ້ໃດຜູ້ໜຶ່ງຫລຽວເບິ່ງແຜ່ນ
ດິນ, ຈົ່ງເບິ່ງ, ຄວາມມືດ ແລະ ຄວາມເສົ້າ
ສະຫລົດໃຈ, ແລະ ຄວາມສະຫວ່າງກໍຖືກ
ເຮັດໃຫ້ມືດມົວໃນຟ້າສະຫວັນເສຍ.

## ບົດທີ 16

*ເອຊາຢາເຫັນພຣະຜູ້ເປັນເຈົ້າ—ບາບຂອງເອຊາຢາໄດ້ຮັບການອະໄພໂທດ—ເພິ່ນຖືກເອີ້ນໃຫ້ທຳນາຍ—ເພິ່ນທຳນາຍເຖິງການປະຕິເສດຄຳສອນຂອງພຣະຄຣິດຂອງຊາວຢິວ—ຜູ້ທີ່ເຫລືອຢູ່ຈະກັບຄືນມາ—ປຽບທຽບກັບເອຊາຢາ 6. ປະມານ 559–545 ປີກ່ອນ ຄ.ສ.*

1 ໃນ [ກ]ປີທີ່ກະສັດອຸດສີຢາສິ້ນຊີວິດນັ້ນ,
ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າປະ
ທັບຢູ່ເທິງບັນລັງສູງເດັ່ນ, [ຂ]ຊາຍລະໄບຜ້າ
ເຄື່ອງທົງຂອງພຣະອົງແຜ່ເຕັມພຣະວິຫານ.
2 ຢູ່ເໜືອພຣະອົງມີ [ກ]ເຊຣາຟີມຫລາຍ
ອົງຢືນຢູ່; ແຕ່ລະອົງມີປີກຫົກປີກ, ແຕ່ລະ
ອົງເອົາສອງປີກປົກໜ້າ, ສອງປີກປົກຕີນ,
ແລະ ອີກສອງປີກໃຊ້ບິນໄປ.
3 ແຕ່ລະອົງຮ້ອງໃສ່ກັນ ແລະ ກ່າວວ່າ:
ບໍລິສຸດ, ບໍລິສຸດ, ບໍລິສຸດ, ພຣະຜູ້ເປັນເຈົ້າ
ແຫ່ງຈັກກະວານ; ລັດສະໝີພາບຂອງພຣະ
ອົງແຜ່ກະຈາຍໄປທົ່ວແຜ່ນດິນໂລກ.
4 ແລະ [ກ]ເສົາປະຕູເຄື່ອນ ເພາະສຽງຂອງ
ຜູ້ທີ່ຮ້ອງ, ແລະ ພຣະວິຫານເຕັມໄປດ້ວຍ
ຄວັນ.
5 ຈາກນັ້ນຂ້າພະເຈົ້າໄດ້ເວົ້າວ່າ: ວິບັດ
ເກີດກັບຂ້າພະເຈົ້າ! ເພາະ ຂ້າພະເຈົ້າ
[ກ]ຫລົ້ມຈົມ; ເພາະຂ້າພະເຈົ້າເປັນຄົນທີ່ຮີມ
ຝີປາກບໍ່ສະອາດ; ແລະ ຂ້າພະເຈົ້າຢູ່ທ່າມ
ກາງຜູ້ຄົນທີ່ຮີມຝີປາກບໍ່ສະອາດ; ເພາະ
ຂ້າພະເຈົ້າໄດ້ເຫັນກະສັດ, ຈອມໂຍທາກັບ
ຕາຕົນເອງແລ້ວ.
6 ຕໍ່ມາ ມີເຊຣາຟີມອົງໜຶ່ງໄດ້ບິນມາຫາ
ຂ້າພະເຈົ້າ, ມີ [ກ]ຖ່ານໄຟສີແດງໃນມືຂອງ
ພຣະອົງ, ຊຶ່ງພຣະອົງໄດ້ຈັບເອົາມາຈາກ
ແທ່ນບູຊາດ້ວຍຄີມໜີບ;
7 ແລະ ພຣະອົງໄດ້ເອົາຖ່ານໄຟນັ້ນແປະ
ໃສ່ປາກຂອງຂ້າພະເຈົ້າ, ແລ້ວກ່າວວ່າ: ສິ່ງ
ນີ້ໄດ້ຖືກປາກຂອງເຈົ້າແລ້ວ; [ກ]ຄວາມຊົ່ວ
ຮ້າຍຂອງເຈົ້າກໍຖືກຍົກເລີກ, ແລະ ບາບ
ຂອງເຈົ້າກໍໄດ້ຮັບອະໄພ.
8 ແລະ ຂ້າພະເຈົ້າໄດ້ຍິນສຸລະສຽງຂອງ
ພຣະຜູ້ເປັນເຈົ້າອີກ, ມີຄວາມວ່າ: ເຮົາຈະ
ສົ່ງຜູ້ໃດໄປ, ແລະ ແມ່ນໃຜຈະໄປເພື່ອ
ພວກເຮົາ? ຈາກນັ້ນຂ້າພະເຈົ້າໄດ້ທູນວ່າ:
ຂ້ານ້ອຍຈະໄປດອກ; ຈົ່ງສົ່ງຂ້ານ້ອຍໄປ
ຖ້ອນ.
9 ແລະ ພຣະອົງໄດ້ກ່າວວ່າ: ຈົ່ງໄປບອກ
ຜູ້ຄົນພວກນີ້ວ່າ—ພວກເຈົ້າຈະຟັງຫລາຍ
ປານໃດ, ພວກເຈົ້າກໍຈະບໍ່ເຂົ້າໃຈ; ພວກ

29 *ກ* 3 ນຟ 21:12–13.
**16** 1 *ກ* ອສ ປະມານ 750 ປີ ກ່ອນ ຄ.ສ.
*ຂ* ອສ ຂອບເສື້ອຜ້າ ຂອງພຣະອົງ, ຫລື ຂອບເຄື່ອງທົງ.
2 *ກ* ຄມພ ເຄຣູບີມ.
4 *ກ* ເຮັບເຣີ ຮາກຖານຂອງຕີນປະຕູໄດ້ສັ່ນສະເທືອນ.
5 *ກ* ເຮັບເຣີ ຖືກຕັດອອກ; ຍົກຕົວຢ່າງ, ເພິ່ນໄດ້ໜັກໃຈຫລາຍ ເມື່ອສຳນຶກໄດ້ເຖິງບາບກຳທີ່ເພິ່ນ ແລະ ຜູ້ຄົນຂອງເພິ່ນມີ.
6 *ກ* ອສ ສັນຍາລັກຂອງການຊຳລະລ້າງ.
7 *ກ* ຄມພ ປົດບາບ, ການປົດບາບ.

ເຈົ້າຈະເບິ່ງຄັກປານໃດ, ພວກເຈົ້າກໍຈະບໍ່
ຮູ້ວ່າແມ່ນຫຍັງຈະເກີດຂຶ້ນ.
10 ຈົ່ງເຮັດໃຫ້ໃຈຜູ້ຄົນພວກນີ້ມືດມົນ,
ແລະ ເຮັດໃຫ້ຫູຂອງພວກເຂົາໜວກ, ແລະ
ປິດຕາຂອງພວກເຂົາເສຍ—ຢ້ານວ່າພວກ
ເຂົາຈະເຫັນດ້ວຍຕາຂອງພວກເຂົາ, ແລະ
[ກ]ໄດ້ຍິນດ້ວຍຫູຂອງພວກເຂົາ, ແລະ ເຂົ້າ
ໃຈດ້ວຍໃຈຂອງພວກເຂົາ, ແລ້ວປ່ຽນໃຈ
ເຫລື້ອມໃສ ແລະ ໄດ້ຮັບການປິ່ນປົວ.
11 ຈາກນັ້ນຂ້າພະເຈົ້າໄດ້ທູນຖາມວ່າ:
ພຣະອົງເຈົ້າເອີຍ, ຈະໃຫ້ເປັນຢ່າງນີ້ນານ
ປານໃດ? ແລະ ພຣະອົງໄດ້ຕອບວ່າ: ຈົນ
ກວ່າຫົວເມືອງທັງຫລາຍຮ້າງເປົ່າປາດສະ
ຈາກຜູ້ອາໄສຢູ່, ແລະ ເຮືອນບໍ່ມີຄົນ;
12 ແລະ ພຣະອົງຈະ [ກ]ກວາດຕ້ອນຝູງ
ຄົນອອກໜີໄປໄກໆ, ເພາະຈະມີການປະ
ຖິ້ມອັນໃຫຍ່ຫລວງໃນທ່າມກາງແຜ່ນດິນ.
13 ເຖິງແມ່ນວ່າຍັງເຫລືອຄົນຢູ່ພຽງໜຶ່ງ
ໃນສິບ, ແລະ ພວກເຂົາຈະກັບມາ, ແລະ
ຖືກກິນຄືກັນກັບຕົ້ນຖີນ ແລະ ຕົ້ນໂອກ, ຊຶ່ງ
ເນື້ອແທ້ຂອງມັນຢູ່ໃນຕົ້ນເວລາໃບຂອງມັນ
ຫລົ່ນອອກໄປ; ເພື່ອແກ່ນບໍລິສຸດຈະເປັນ
[ກ]ເນື້ອແທ້ຂອງມັນ.

## ບົດທີ 17

*ເອຟະຣາອິມ ແລະ ຊີເຣຍປະກາດສົງຄາມຕໍ່ຕ້ານຢູດາ—ພຣະຄຣິດຈະມາກຳເນີດກັບຍິງທີ່ບໍລິສຸດ—ປຽບທຽບກັບເອຊາຢາ 7. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນສະ
ໄໝຂອງອາຮາດຜູ້ເປັນລູກຊາຍຂອງໂຢ
ທາມ, ແລະ ໂຢທາມ ເປັນລູກຊາຍຂອງອຸດ
ສີຢາ, ກະສັດຂອງຢູດາ, ຄືເຣຊີນກະສັດ
ຂອງຊີເຣຍ, ແລະ ເປກາເປັນລູກຊາຍຂອງ
ເຣມາລີຢາ ກະສັດຂອງອິດສະຣາເອນໄດ້
ເຂົ້າໂຈມຕີນະຄອນເຢຣູຊາເລັມ, ແຕ່ພວກ
ເຂົາບໍ່ສາມາດຍຶດເອົາເມືອງນີ້ໄດ້.
2 ແລະ ເຊື້ອສາຍຂອງດາວິດໄດ້ຂ່າວ,
ມີຄວາມວ່າ: ຊີເຣຍຜູກສຳພັນກັບ [ກ]ເອຟະ
ຣາອິມແລ້ວ. ແລະ ໃຈຂອງກະສັດ ແລະ
ໃຈຂອງຜູ້ຄົນຂອງເພິ່ນຫວັ່ນໄຫວຄືກັນກັບ
ຕົ້ນໄມ້ໃນປ່າເໜັງຕີງດ້ວຍລົມພັດແຮງ.
3 ຈາກນັ້ນພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອຊາຢາວ່າ: ບັດນີ້ເຈົ້າກັບ [ກ]ເຊອາຢາຊຸບ,
ລູກຊາຍຂອງເຈົ້າຈົ່ງໄປເຝົ້າກະສັດອາ
ຮາດຢູ່ບ່ອນຮ່ອງນ້ຳໄຫລມາສຸດ ເທິງຖະ
ໜົນບ່ອນທີ່ເຮັດແຜ່ນຜ້າ;
4 ແລະ ບອກເພິ່ນວ່າ: ຈົ່ງສະຫງົບຈິດ
ສະຫງົບໃຈ; [ກ]ຢ່າຢ້ານກົວ ຫລື ທຸກໃຈ
ເລີຍ, ເພາະຄວາມຄຽດແຄ້ນຂອງລູກຊາຍ
ຂອງເຣມາລີຢາ, ກະສັດເຣຊີນ ແລະ ຜູ້ຄົນ
ຊີເຣຍນັ້ນ ບໍ່ມີອັນຕະລາຍຮ້າຍແຮງຫຍັງ
ດອກ, ພວກເຂົາທັງສອງເປັນດັ່ງດົ້ນໄຟ
ມອດ ຊຶ່ງຍັງເຫລືອແຕ່ຄວັນ.
5 ເພາະວ່າຊີເຣຍ, ເອຟະຣາອິມ, ແລະ
ລູກຊາຍຂອງເຣມາລີຢາໄດ້ແນະນຳຊົ່ວຕໍ່
ຕ້ານເຈົ້າ, ໂດຍກ່າວວ່າ:
6 ໃຫ້ພວກເຮົາໄປຕໍ່ສູ້ກັບຢູດາ ແລະ ລົບ
ກວນມັນ ແລະ [ກ]ຍຶດເອົາເປັນຫົວເມືອງຂຶ້ນ,

---

10 *ກ* ມທ 13:14–15.
12 *ກ* 2 ກສ 17:18, 20.
13 *ກ* ອສ ຄືກັນກັບຕົ້ນໄມ້, ເຖິງແມ່ນໃບຂອງມັນຈະກະຈັດກະຈາຍໄປ, ແຕ່ຊີວິດ ແລະ ສັກກະຍະພາບຂອງການຜະລິດແກ່ນ ກໍຍັງຄົງຢູ່ໃນຕົວຂອງຕົ້ນນັ້ນ.
**17** 2 *ກ* ອສ ພາກເໜືອທັງໝົດຂອງອິດສະຣາເອນ ໄດ້ຖືກເອີ້ນຕາມຊື່ຂອງເອຟະຣາອິມ, ຜູ້ນຳເຜົ່າຂອງພາກເໜືອ.
3 *ກ* ເຮັບເຣີ ຜູ້ທີ່ເຫລືອຢູ່ຈະກັບຄືນມາ.
4 *ກ* ອສ ບໍ່ຕ້ອງວິຕົກກັງວົນກັບການໂຈມຕີ; ກະສັດສອງອົງນັ້ນ ບໍ່ມີອັນຕະລາຍຮ້າຍແຮງຫຍັງ.
6 *ກ* ເຮັບເຣີ ແຍກມັນອອກຈາກກັນ.

ແທ້ຈິງແລ້ວ, ແມ່ນຕັ້ງລູກຊາຍຂອງຕາເບ
ເອນເປັນກະສັດປົກຄອງປະເທດນີ້.
7 ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ມັນ
ຈະຕັ້ງຢູ່ບໍ່ໄດ້, ແລະ ທັງຈະເກີດຂຶ້ນບໍ່ໄດ້
ດອກ.
8 ເພາະເມືອງຫລວງຂອງຊີເຣຍຄືດາມັສ
ກັດ, ແລະ ຫົວໜ້າຂອງດາມັສກັດຄືເຣຊິນ;
ພາຍໃນຫົກສິບຫ້າປີ ເອຟະຣາອິມຈະແຕກ
ຫັກຈົນວ່າບໍ່ມີຜູ້ຄົນ.
9 ແລະ ເມືອງຫລວງຂອງເອຟະຣາອິມຄື
ຊາມາເຣຍ, ແລະ ຫົວໜ້າຂອງຊາມາເຣຍ
ຄືລູກຊາຍຂອງເຣມາລີຢາ. ແນ່ນອນຖ້າ
[ກ]ຄວາມເຊື່ອຂອງເຈົ້າບໍ່ຫລາຍ ເຈົ້າກໍຈະ
ສະຖາປະນາຂຶ້ນບໍ່ໄດ້.
10 ພຣະຜູ້ເປັນເຈົ້າຮັບສັ່ງກັບອາຣາດ
ອີກ, ມີຄວາມວ່າ:
11 ເຈົ້າຈົ່ງຂໍ [ກ]ເຄື່ອງໝາຍອັນສຳຄັນ
ຈາກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງເຈົ້າ; ຈົ່ງຂໍທັງໃນຄວາມເລິກ, ຫລື ໃນ
ຄວາມສູງເບື້ອງບົນ.
12 ແຕ່ອາຣາດທູນວ່າ: ຂ້ານ້ອຍຈະບໍ່ຂໍ
ເຄື່ອງໝາຍສຳຄັນ, ທັງຂ້ານ້ອຍຈະບໍ່ [ກ]ທົດ
ລອງພຣະຜູ້ເປັນເຈົ້າ.
13 ແລະ ເອຊາຍາຈຶ່ງໄດ້ເວົ້າວ່າ: ບັດນີ້,
ທ່ານຈົ່ງຟັງ, ໂອ້ ເຊື້ອສາຍຂອງດາວິດ; ມັນ
ເປັນເລື່ອງເລັກໜ້ອຍສຳລັບພວກເຈົ້າທີ່ຈະ
ລົບກວນມະນຸດ, ແຕ່ພວກເຈົ້າຈະລົບກວນ
ພຣະເຈົ້າອີກບໍ?
14 ສະນັ້ນ, ພຣະຜູ້ເປັນເຈົ້າເອງຈະ
ປະທານເຄື່ອງໝາຍແບບໜຶ່ງໃຫ້ພວກ
ເຈົ້າ—ຈົ່ງເບິ່ງ, [ກ]ຜູ້ຍິງບໍລິສຸດຜູ້ໜຶ່ງ ຈະ
ຕັ້ງທ້ອງ, ແລະ ຈະກຳເນີດລູກຊາຍຜູ້ໜຶ່ງ,
ແລະ ຈະເອີ້ນຊື່ຂອງເດັກນັ້ນວ່າ [ຂ]ເອມານູ
ເອນ.
15 ເພິ່ນຈະກິນເນີຍ ແລະ ນ້ຳເຜິ້ງເພື່ອ
ຈະ ໄດ້ຮູ້ຈັກປະຕິເສດ ຄວາມຊົ່ວ ແລະ
ເລືອກເອົາຄວາມດີ.
16 ກ່ອນເວລາ [ກ]ເພິ່ນຈະຮູ້ຈັກປະຕິເສດ
ຄວາມຊົ່ວ ແລະ ເລືອກເອົາຄວາມດີນັ້ນ,
ແຜ່ນດິນຂອງກະສັດ [ຂ]ທັງສອງອົງທີ່ພວກ
ເຈົ້າຢ້ານກົວຈະເພພັງຮ້າງເປົ່າ.
17 ພຣະຜູ້ເປັນເຈົ້າຈະບັນດານໃຫ້ວັນ
ໂຫດຮ້າຍ [ກ]ມາເຖິງເຈົ້າ, ແລະ ເຖິງຜູ້ຄົນ
ຂອງເຈົ້າ ແລະ ລາຊາວັງຂອງບິດາເຈົ້າ,
ວັນນັ້ນຈະໂຫດຮ້າຍກວ່າທຸກໆວັນທີ່ເຄີຍ
ມີມາຕັ້ງແຕ່ອານາຈັກຂອງ [ຂ]ເອຟະຣາອິມ
ແຍກອອກຈາກຢູດາ, ຄືວັນນັ້ນກະສັດອັດ
ຊີເຣຍຈະມາທຳລາຍ.
18 ແລະ ເຫດການຈະບັງເກີດຂຶ້ນໃນມື້
ນັ້ນຄື ພຣະຜູ້ເປັນເຈົ້າຈະ [ກ]ຜິວເອົາແມງ
ໄມ້ທີ່ຢູ່ທາງໄກສຸດຂອງເອຢິບ ແລະ ຈະຜິວ
ປາກເອົາແມ່ເຜິ້ງທີ່ຢູ່ໃນແຜ່ນດິນຂອງອັດຊີ
ເຣຍ.
19 ແລະ ມັນຈະມາ, ແລະ ມັນທັງໝົດ
ຈະມາຢູ່ໃນຮ່ອມພູ, ແລະ ຢູ່ໃນຖ້ຳໃນໂງ່ນ
ຫີນ, ແລະ ຢູ່ໃນພຸ່ມໄມ້, ແລະ ຢູ່ເດີ່ນຫຍ້າ
ທັງໝົດ.
20 ໃນວັນດຽວກັນນັ້ນ ພຣະຜູ້ເປັນເຈົ້າ
ຈະຈ້າງເອົາ [ກ]ຊ່າງຕັດຜົມຈາກຟາກແມ່ນ້ຳ
ເບື້ອງນັ້ນ, ຄື [ຂ]ກະສັດອັດຊີເຣຍ, ເພິ່ນຈະ
ແຖໜວດ, ແຖຜົມ; ແລະ ແຖຂົນໃນຕີນຕົວ
ຂອງເຈົ້າຖິ້ມ.

9 *ກ* 2 ຂຄ 20:20.
11 *ກ* ຄມພ ເຄື່ອງໝາຍ.
12 *ກ* ອສ ທົດສອບ, ລອງ
ເບິ່ງ, ຫລື ພິສູດ.
14 *ກ* ຄມພ ຄົນບໍລິສຸດ.
*ຂ* ເຮັບເຣີ ພຣະເຈົ້າສະຖິດຢູ່
ກັບເຮົາ.
ຄມພ ເອມານູເອນ.
16 *ກ* 2 ນຟ 18:4.
*ຂ* 2 ກສ 15:30; 16:9.
17 *ກ* 2 ຂຄ 28:19–21.
*ຂ* 1 ກສ 12:16–19.
18 *ກ* ພ ໝາກຫວິດ; ຍົກຕົວຢ່າງ,
ສັນຍານ, ຮ້ອງ. ອຊຢ 5:26.
20 *ກ* ອສ ແຜ່ນດິນຈະຖືກ
ທຳລາຍໂດຍຄົນຕ່າງຊາດ.
*ຂ* 2 ກສ 16:5–9.

21 ແລະ ເຫດການ ຈະ ບັງ ເກີດ ຂຶ້ນ ໃນ
ມື້ນັ້ນ, ຊາຍຜູ້ໜຶ່ງຈະ [ກ]ລ້ຽງງົວ ໂຕໜຶ່ງກັບ
ແກະສອງໂຕ;
22 ແລະ ເຫດການຈະບັງເກີດຂຶ້ນ, ເພາະ
ຄວາມອຸດົມສົມບູນຂອງນົມ ເຂົາຈະໄດ້ກິນ
ເນີຍ; ເພາະທຸກຄົນທີ່ເຫລືອຢູ່ໃນແຜ່ນດິນ
ຈະກິນເນີຍ ແລະ ນ້ຳເຜິ້ງ.
23 ແລະ ເຫດການຈະບັງເກີດຂຶ້ນໃນມື້
ນັ້ນ, ທຸກແຫ່ງ, ບ່ອນທີ່ມີຕົ້ນອະງຸ່ນພັນກົກ,
ຊຶ່ງມີລາຄາໜຶ່ງພັນ [ກ]ຫລຽນ ຈະເຕັມໄປ
ດ້ວຍເຄືອ ແລະ ກົກໜາມ.
24 ຄົນຈະມາທີ່ນັ້ນດ້ວຍລູກທະນູ ແລະ
ຄັນທະນູ, ເພາະທົ່ວແຜ່ນດິນຈະເຕັມໄປ
ດ້ວຍເຄືອ ແລະ ກົກໜາມ.
25 ແລະ ເນີນພູທຸກໜ່ອຍຈະຖືກຂຸດ
ດ້ວຍຈົກ, ຄວາມຢ້ານກົວເຄືອ ແລະ ກົກ
ໜາມຈະບໍ່ເກີດຈາກທີ່ນັ້ນ; ແຕ່ມັນຈະເປັນ
ບ່ອນທີ່ສົ່ງຝູງງົວເຖິກອອກໄປ, ແລະ ເປັນ
ບ່ອນຢຽບຍ່ຳຂອງ [ກ]ຝູງສັດທີ່ມີຄ່ານ້ອຍ.

## ບົດທີ 18

*ພຣະຄຣິດຈະເປັນເໝືອນຫີນທີ່ຕຳຕີນ ແລະ ເປັນເໝືອນແຮ້ວທີ່ຫ້າງໄວ້—ຈົ່ງສະແຫວງຫາພຣະຜູ້ເປັນເຈົ້າບໍ່ແມ່ນໝໍດູທີ່ເວົ້າພ່ຳ—ຈົ່ງກັບມາຫາກົດ ແລະ ປະຈັກພະຍານເພື່ອເປັນການຊີ້ນຳ—ປຽບທຽບກັບເອຊາຢາ 8. ປະມານ 559–545 ປີກ່ອນ ຄ.ສ.*

1 ຍິ່ງໄປກວ່ານັ້ນ, ພຣະຄຳຂອງພຣະຜູ້
ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ເຈົ້າຈົ່ງ
ເອົາແຜ່ນໜັງກ້ຳໃຫຍ່ມາ, ແລະ ຂຽນດ້ວຍ
ປາກກາຂອງມະນຸດໃສ່ໃນນັ້ນວ່າ, [ກ]ມາເຮີ
ຊາລານຫັດສະບັດ.
2 ແລະ ຂ້າພະເຈົ້າໄດ້ນຳເອົາ [ກ]ພະຍານ
ທີ່ຊື່ສັດມາເຮັດບັນທຶກກັບຂ້າພະເຈົ້າຄື, ອູ
ລີອາ ຜູ້ເປັນປະໂລຫິດ, ແລະ ເຊກາຣີຢາ,
ລູກຊາຍຂອງເຢເບເຣກີຢາ.
3 ແລະ ຂ້າພະເຈົ້າໄດ້ສົມສູ່ຢູ່ຮ່ວມກັບ
[ກ]ເມຍຂອງຂ້າພະເຈົ້າ; ແລະ ນາງໄດ້ຕັ້ງ
ທ້ອງ; ແລະ ໄດ້ຄອດລູກມາເປັນຊາຍ.
ພຣະຜູ້ເປັນເຈົ້າບອກຂ້າພະເຈົ້າວ່າ: ຈົ່ງ
ເອີ້ນຊື່ຂອງລາວວ່າ ມາເຮີຊາລານຫັດສະ
ບັດ.
4 ຈົ່ງເບິ່ງ, [ກ]ກ່ອນ [ຂ]ເດັກນ້ອຍຜູ້ນີ້ໃຫຍ່
ຂຶ້ນ ມາພໍຮູ້ຈັກເອີ້ນບິດາມານດາໄດ້, ຊັບ
ສົມບັດທັງໝົດໃນເມືອງດາມັສກັດ ແລະ
ຂອງທີ່ [ຄ]ຍາດຊີງມາໄດ້ຈາກຊາມາເຣຍຈະ
ຖືກກະສັດອັດຊີເຣຍຍຶດເອົາໄປໝົດ.
5 ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າ
ອີກວ່າ:
6 ຍ້ອນວ່າຜູ້ຄົນພວກນີ້ໄດ້ປະຕິເສດ
ສາຍນ້ຳ [ກ]ຊີໂລອາທີ່ງຽບສະຫງັດ, ແລະ
ສັ່ນເຊັນຕໍ່ໜ້າກະສັດ [ຂ]ເຣຊິນ ແລະ ລູກ
ຊາຍຂອງເຣມາລີຢາ;
7 ແລ້ວ ສະນັ້ນ, ຈົ່ງ ເບິ່ງ, ພຣະ ຜູ້ ເປັນ
ເຈົ້າຈະນຳເອົານ້ຳຈາກແມ່ນ້ຳທີ່ໄຫລແຮງ,
ແລະ ຫລາຍສາຍ [ກ]ມາຫາພວກເຂົາຈົນກະ
ທັ້ງກະສັດຂອງອັດຊີເຣຍ ແລະ ລັດສະໝີ
ພາບທັງໝົດຂອງເພິ່ນ; ແລະ ເພິ່ນຈະຂ້າມ

---

21*ກ* ອສ ພຽງແຕ່ຜູ້ຄົນທີ່ກຸ້ມຕົນເອງຈຳນວນໜ້ອຍໜຶ່ງ ຈະເຫລືອຢູ່.
23*ກ* ພ ຫລຽນເງິນ.
25*ກ* ເຮັບເຣີ ຝູງແກະ, ຫລື ຝູງແບ້.
**18** 1*ກ* ເຮັບເຣີ ລົງມືປຸ້ນທັນທີ, ເພິ່ນໄດ້ຂອງປຸ້ນມາໄວ.
2*ກ* ຄມພ ພະຍານ.
3*ກ* ອສ ເມຍຂອງເພິ່ນ.
4*ກ* ອຊຢ 8:4.
*ຂ* 2 ນຟ 17:16.
*ຄ* 2 ກສ 15:29.
6*ກ* ປຖກ 49:10; ປຈສ ປຖກ 50:24 (ພາກທ້ອຍທ້າຍ).
*ຂ* ອຊຢ 7:1.
7*ກ* ອສ ມາຫາຊາວອິດສະຣາເອນທີ່ຢູ່ພາກເໜືອກ່ອນ.

ທ້ອຍ ແລະ ຝັ່ງທັງໝົດຂອງເພິ່ນ.
8 ແລະ [ກ]ເພິ່ນ ຈະ ໄຫລ ຜ່ານ ຢູ ດາ ໄປ;
ເພິ່ນຈະໄຫລ ແລະ ຖ້ວມ ຈົນ ເຖິງ ພຽງຄໍ;
ແລະ ການກາງປີກຂອງເພິ່ນຈະເຕັມຄວາມ
ກວ້າງຂອງແຜ່ນດິນຂອງພຣະອົງ, ໂອ້ [ຂ]ເອ
ມານູເອນ.
9 [ກ]ຈົ່ງພາກັນຢ້ານກົວເຖີດ, ໂອ້ ຊົນຊາດ
ທັງຫລາຍ ເອີຍ, ເຈົ້າຈະຖືກ ຫັກ ເປັນ ຊິ້ນ
ສ່ວນ; ແລະ ບັນດາປະເທດໄກທັງໝົດຈົ່ງ
ຟັງເດີ້; ແລະ ຕຽມຕົວໄວ້ເຖີດ ແລະ ເຈົ້າຈະ
ຖືກຫັກເປັນຊິ້ນສ່ວນ; ຈົ່ງຕຽມຕົວໄວ້ເຖີດ,
ແລະ ເຈົ້າຈະຖືກຫັກເປັນຊິ້ນສ່ວນ.
10 ຈົ່ງ ວາງ ແຜນ ກັນ ແຕ່ ມັນ ຈະ ບໍ່ ສຳ
ເລັດ, ເວົ້າແຕ່ຈະບໍ່ມີປະ ໂຫຍດ; [ກ]ເພາະ
ພຣະເຈົ້າຢູ່ກັບພວກເຮົາແລ້ວ.
11 ເພາະພຣະຜູ້ເປັນເຈົ້າໄດ້ເຕືອນຂ້າ
ພະເຈົ້າດ້ວຍ ລິດ ທາ ນຸ ພາບ ອັນ ຍິ່ງ ໃຫຍ່
ຂອງພຣະອົງ, ແລະ ແນະນຳຂ້າພະເຈົ້າ
ວ່າ ບໍ່ຄວນເດີນໃນເສັ້ນທາງທີ່ຜູ້ຄົນພວກນີ້
ເຮັດ, ໂດຍກ່າວວ່າ:
12 ເຈົ້າຢ່າເວົ້າວ່າ, [ກ]ພັນທະມິດ, ແກ່ທຸກ
ຄົນທີ່ຜູ້ຄົນພວກນີ້ຈະເວົ້າວ່າ, ພັນທະມິດ;
ທັງຢ່າຢ້ານກົວຄວາມຢ້ານກົວຂອງພວກ
ເຂົາ, ຫລື ຢ່າຕົກໃຈເລີຍ.
13 ຖວາຍ ຄວາມ ສັກສິດ ແດ່ ອົງ ຈອມ
ໂຍທາເຖີດ, ແລະ [ກ]ໃຫ້ພຣະອົງເປັນທີ່ຢ້ານ
ກົວຂອງເຈົ້າ, ແລະ ໃຫ້ພຣະອົງເປັນທີ່ໜ້າ
ເກງຂາມຂອງເຈົ້າ.
14 ແລະ ພຣະ ອົງ ເປັນ [ກ]ສະຖານ ທີ່ ສັກ
ສິດ; ແຕ່ເປັນເໝືອນ [ຂ]ກ້ອນຫີນທີ່ເຮັດໃຫ້
ສະດຸດລົ້ມ, ແລະ ເປັນສີລາທີ່ເຮັດໃຫ້ເຄືອງ
ແຄ້ນ ໃຈ ຕໍ່ ເຊື້ອສາຍ ອິດສະ ຣາເອນສອງ
ເຜົ່າ, ເປັນກັບດັກ ແລະ ບ້ວງແຮ້ວຕໍ່ຜູ້ອາ
ໄສຂອງເຢຣູຊາເລັມ.
15 ແລະ ຄົນເປັນຈຳນວນຫລວງຫລາຍ
ໃນບັນດາພວກເຂົາຈະ [ກ]ເຕະສະດຸດ ແລະ
ລົ້ມລົງ, ແລະ ຖືກບ້ວງແຮ້ວ ແລະ ລົ້ມລົງ
ເປັນບາດແຜ ແລະ ຖືກພາຕົວໄປ.
16 ຈົ່ງຜູກມັດປະຈັກພະຍານໄວ້, ຈົ່ງຜະ
ນຶກ [ກ]ກົດໄວ້ໃນບັນດາສານຸສິດຂອງເຮົາ.
17 ແລະ ຂ້າພະເຈົ້າຈະລໍຖ້າພຣະຜູ້ເປັນ
ເຈົ້າທີ່ [ກ]ເຊື່ອງພຣະພັກຈາກເຊື້ອສາຍຂອງ
ຢາໂຄບ, ແລະ ຂ້າພະເຈົ້າຈະຊອກຫາ
ພຣະອົງ.
18 ຈົ່ງເບິ່ງ, ຂ້າພະເຈົ້າ ແລະ ລູກຫລານ
ທີ່ພຣະຜູ້ເປັນເຈົ້າປະທານໃຫ້ຂ້າພະເຈົ້າ
ເພື່ອ ເປັນ [ກ]ເຄື່ອງໝາຍ ແລະ ເພື່ອເປັນ
ການ ແປກປະ ຫລາດ ໃນອິດສະຣາເອນ
ອັນມາຈາກຈອມໂຍທາ, ຜູ້ປະທັບຢູ່ເທິງພູ
ຊີໂອນ.
19 ແລະ ເມື່ອ ພວກ ເຂົາ ຈະ ບອກ ກັບ
ພວກທ່ານວ່າ: ຈົ່ງຊອກຫາ [ກ]ຄົນທີ່ລ້ຽງວິນ
ຍານ, ແລະ [ຂ]ໝໍດູທີ່ເວົ້າພຶມພຳ ແລະ ຈົ່ມພຶມ
ພຳຢູ່ໃນລຳຄໍ—[ຄ]ເປັນການສົມຄວນແລ້ວ

8 ກ ອສ ອັດຊີເຣຍຈະຊຶມ ເຂົ້າໄປສູ່ຢູດານຳອີກ.
ຂ ຄມພ ເອມານູເອນ.
9 ກ ອສ ສ້າງພັນທະມິດ.
10 ກ ອສ ຢູດາ (ແຜ່ນດິນເອມານູເອນ) ຈະຖືກຮັກສາໄວ້. ພສສ 46:7.
12 ກ ອສ ຢູດາບໍ່ຄວນເພິ່ງອາໄສແຜນການລັບກັບຄົນອື່ນ ເພື່ອຄວາມປອດໄພ.
13 ກ ອສ ມີຄວາມຄາລະວະ ແລະ ຖ່ອມຕົວຕໍ່ພຣະພັກຂອງພຣະເຈົ້າ.
14 ກ ອຊກ 11:15–21.
ຂ 1 ປຕ 2:4–8; ຢຄ 4:14–15.
15 ກ ມທ 21:42–44.
16 ກ ເຮັບເຣີ ການສອນ, ຫລື ຄຳສອນ. ຄມພ ພຣະກິດຕິຄຸນ.
17 ກ ອຊຢ 54:8.
18 ກ ອສ ຊື່ຂອງເອຊາຢາ ແລະ ພວກລູກຊາຍຂອງເພິ່ນໝາຍເຖິງ “ພຣະເຢໂຮວາຄຸ້ມຄອງ”; “ຜູ້ທີ່ເຫລືອຢູ່ຈະກັບຄືນມາ”; ແລະ “ລົງມືປຸ້ນທັນທີ, ເພິ່ນໄດ້ຂອງປຸ້ນມາໄວ.” 2 ນຟ 17:3; 18:3.
19 ກ ລລວ 20:6.
ຂ ອສ ໝໍເວດມົນ, ໝໍດູ.
ຄ 1 ຊມອ 28:6–20.

ບໍ່ທີ່ຜູ້ຄົນບໍ່ຊອກຫາພຣະເຈົ້າຂອງພວກ
ເຂົາ ເພື່ອຜູ້ທີ່ມີຊີວິດຈະໄດ້ຍິນ [ງ]ຈາກຜູ້
ຕາຍ?
20 ຊອກຫາກົດ ແລະ ປະຈັກພະຍານ;
ແລະ ຖ້າຫາກ [ກ]ພວກເຂົາບໍ່ເວົ້າຕາມພຣະ
ຄຳນີ້, ກໍຍ້ອນວ່າມັນບໍ່ມີຄວາມສະຫວ່າງຢູ່
ໃນຕົວຂອງພວກເຂົາ.
21 ແລະ [ກ]ພວກເຂົາຈະຊັດເຊພະເນ
ຈອນໄປດ້ວຍຄວາມໝົດຫວັງ ແລະ ອຶດ
ຢາກ; ແລະ ເຫດການຈະບັງເກີດຂຶ້ນຄື
ເມື່ອພວກເຂົາຫິວຢາກກິນ, ພວກເຂົາຈະ
ຄຽດແຄ້ນ ແລະ ສາບແຊ່ງກະສັດກັບພຣະ
ເຈົ້າຂອງພວກເຂົາ ແລະ ແຫງນໜ້າຂຶ້ນ
ຟ້າ.
22 ແລະ ພວກເຂົາຈະຫລຽວເບິ່ງໂລກ
ແລະ ເຫັນຄວາມຫຍຸ້ງຍາກ, ແລະ ຄວາມ
ມືດ, ຄວາມໝົ່ນໝອງອັນເກີດຈາກຄວາມ
ເຈັບປວດ, ແລະ ຈະຖືກຂັບໄລ່ເຂົ້າໄປໃນ
ຄວາມມືດ.

## ບົດທີ 19

*ເອຊາຢາກ່າວກ່ຽວກັບພຣະເມຊີອາ—ຜູ້ຄົນໃນຄວາມມືດຈະເຫັນແສງສະຫວ່າງອັນຍິ່ງໃຫຍ່—ເດັກນ້ອຍຜູ້ໜຶ່ງໄດ້ເກີດມາໃຫ້ແກ່ພວກເຮົາແລ້ວ—ເພິ່ນຈະເປັນອົງສັນຕິລາດ ແລະ ຈະປົກຄອງລາຊາບັນລັງຂອງດາວິດ—ປຽບທຽບກັບເອຊາຢາ 9. ປະມານ 559–545 ປີ ກ່ອນ ຄ.ສ.*

1 ເຖິງຢ່າງໃດກໍຕາມ, ຄວາມໝົ່ນໝອງ
ຈະຍັງບໍ່ເທົ່າກັບທີ່ເຄີຍເປັນມາໃນຄວາມ
ເດືອດຮ້ອນຂອງມັນ, ເມື່ອຄັ້ງທຳອິດ ພຣະ
ອົງໄດ້ເຮັດໃຫ້ [ກ]ແຜ່ນດິນເສບູໂລນ ແລະ
ແຜ່ນດິນເນັບທະລີເປັນທຸກພໍສົມຄວນ,
ແລະ ຕໍ່ມາໄດ້ເຮັດໃຫ້ທຸກໜັກຫລາຍຂຶ້ນ
ໂດຍທາງທະເລແດງເລີຍຈາກແມ່ນ້ຳ
ຈໍແດນ ໃນຄາລີເລຂອງປະຊາຊາດ.
2 ຜູ້ທີ່ດຳເນີນໄປໃນ [ກ]ຄວາມມືດໄດ້ເຫັນ
ແສງສະຫວ່າງຢ່າງໃຫຍ່ຫລວງມາແລ້ວ;
ຄວາມສະຫວ່າງຍ່ອມສ່ອງເຖິງຜູ້ທີ່ຢູ່ໃນ
ແຜ່ນດິນຂອງເງົາແຫ່ງຄວາມຕາຍ.
3 ພຣະອົງໄດ້ເຮັດໃຫ້ປະຊາຊາດເພີ່ມ
ທະວີຂຶ້ນ ແລະ ເຮັດໃຫ້ຄວາມສຸກ [ກ]ເພີ່ມ
ຂຶ້ນ—ພວກເຂົາປິຕິຍິນດີໃນສິ່ງທີ່ພຣະອົງ
ເຮັດເໝືອນດັ່ງຄົນປິຕິຍິນດີເມື່ອຍາມເກັບ
ກ່ຽວ ຫລື ເໝືອນດັ່ງຄາວທີ່ພວກເຂົາແບ່ງ
ປັນຂອງທີ່ຍຶດມາໄດ້.
4 ເພາະພຣະອົງໄດ້ຫັກແອກທີ່ເຮັດໃຫ້
ພວກເຂົາໜັກໜ່ວງ, ແລະ ໄມ້ຄານທີ່ພາດ
ບ່າຂອງພວກເຂົາຫັກແລ້ວ.
5 ເພາະທຸກສະໜາມຮົບຂອງນັກຮົບ
ຍ່ອມມີສຽງອຶກກະທຶກຢ່າງສັບສົນ, ແລະ
ອາພອນໂຊກໄປດ້ວຍເລືອດ; ແຕ່ນີ້ຈະ
ເປັນໄປດ້ວຍການເຜົາໄໝ້.
6 ເພາະວ່າ [ກ]ເດັກນ້ອຍຜູ້ໜຶ່ງຈະເກີດມາ
ເພື່ອພວກເຮົາ, ຈະປະທານບຸດຊາຍຜູ້ໜຶ່ງ
ໃຫ້ແກ່ພວກເຮົາ, ແລະ ພຣະອົງຈະເປັນ
[ຂ]ຜູ້ປົກຄອງພວກເຮົາ, ພຣະນາມຂອງພຣະ
ອົງຈະຖືກເອີ້ນວ່າ ຜູ້ປະເສີດ, ຜູ້ປຶກສາ,
[ຄ]ພຣະເຈົ້າຜູ້ຊົງລິດທານຸພາບ, [ງ]ພຣະບິດາ

19 *ງ* ພ ເພື່ອ.
20 *ກ* ອສ (ໃນ ຂໍ້ທີ 21–22) ນຳອີກ.
21 *ກ* ອສ ຊາວອິດສະຣາເອນ ຈະຖືກນຳໄປສູ່ການ ເປັນຊະເລີຍ ເພາະ ພວກເຂົາບໍ່ເຊື່ອຟັງ.

**19** 1 *ກ* ມທ 4:12–16.
2 *ກ* "ຄວາມໝົ່ນໝອງ" ແລະ "ຄວາມມືດ" ຄື ການປະຖິ້ມຄວາມເຊື່ອ ແລະ ການເປັນຊະເລີຍ; "ແສງສະຫວ່າງອັນຍິ່ງ ໃຫຍ່" ຄື ພຣະຄຣິດ.
3 *ກ* ອຊຢ 9:3.
6 *ກ* ອຊຢ 7:14; ລກ 2:11.
*ຂ* ມທ 28:18.
*ຄ* ຕຕ 2:13–14.
*ງ* ແອວ 11:38–39, 44.

ຜູ້ເປັນນິດ, ອົງ [ຈ]ສັນຕິລາດ.

7 ຄວາມຈະເລີນແຫ່ງ [ກ]ການປົກຄອງ ແລະ ສັນຕິສຸກ [ຂ]ຈະບໍ່ມີທີ່ສຸດ, ເທິງບັນລັງຂອງດາວິດ, ແລະ ເໜືອອານາຈັກຂອງເພິ່ນເພື່ອວາງລະບຽບ, ແລະ ສະຖາປະນາຂຶ້ນດ້ວຍຄວາມສະຫລາດສ່ອງໃສ ແລະ ຍຸດຕິທຳ, ເລີ່ມແຕ່ບັດນີ້ຈົນເຖິງຕະຫລອດການ. ຄວາມມຸ້ງໝັ້ນຂອງຈອມໂຍທາຈະທຳການນີ້.

8 ພຣະຜູ້ເປັນເຈົ້າສົ່ງພຣະຄຳຂອງພຣະອົງເຖິງຢາໂຄບ ແລະ ມັນສ່ອງແສງມາເຖິງ [ກ]ອິດສະຣາເອນ.

9 ແລະ ຜູ້ຄົນທັງປວງຈະຮູ້ຈັກ ເຖິງແມ່ນເອຟະຣາອິມ ແລະ ຜູ້ອາໄສຂອງຊາມາເຣຍທີ່ກ່າວດ້ວຍຄວາມຈອງຫອງ ແລະ ດ້ວຍຄວາມເຍີ່ຍິ່ງຂອງໃຈວ່າ:

10 ຕຶກທີ່ສ້າງຂຶ້ນດ້ວຍດິນຈີ່ໄດ້ເພພັງລົງແລ້ວ, ແຕ່ພວກເຮົາຈະສ້າງຂຶ້ນໃໝ່ດ້ວຍຫີນ; ກົກເດື່ອຖືກໂຄ່ນລົງແລ້ວ, ແຕ່ພວກເຮົາຈະປູກຕົ້ນສີດາແທນ.

11 ສະນັ້ນ, ພຣະຜູ້ເປັນເຈົ້າຈະເຮັດໃຫ້ຜູ້ປໍລະປັກຂອງ [ກ]ເຣຊິນຕໍ່ສູ້ກັບເພິ່ນ, ແລະ ຮວບຮວມສັດຕູຂອງເພິ່ນເຂົ້າກັນ;

12 ຊາວຊີເຣຍຢູ່ທາງໜ້າ ແລະ ຊາວຟີລິດສະຕິນຢູ່ທາງຫລັງ; ແລະ ດ້ວຍປາກທີ່ອ້າໄວ້ ພວກເຂົາຈະ [ກ]ກືນກິນອິດສະຣາເອນ. ເພາະທັງໝົດນີ້ [ຂ]ພຣະພິໂລດຂອງພຣະອົງຍັງບໍ່ທັນເຊົາເທື່ອ, ແຕ່ພຣະຫັດຂອງພຣະອົງຍັງຍື່ນອອກມາ.

13 ເພາະຜູ້ຄົນ [ກ]ບໍ່ໄດ້ຫັນໄປຫາພຣະອົງ ຜູ້ລົງທັນພວກເຂົາ, ທັງພວກເຂົາບໍ່ສະແຫວງຫາຈອມໂຍທາ.

14 ສະນັ້ນ ພຣະຜູ້ເປັນເຈົ້າຈະຕັດຫົວ ແລະ ຫາງກິ່ງກ້ານ ແລະ ຕົ້ນອອກຈາກອິດສະຣາເອນໃນມື້ດຽວ.

15 ຜູ້ອະວຸໂສຈະເປັນຫົວ ແລະ ສາດສະດາທີ່ສິດສອນຄວາມຕົວະຈະເປັນຫາງ.

16 ເພາະຜູ້ນຳຂອງຜູ້ຄົນພວກນີ້ເປັນເຫດໃຫ້ເຂົາທຳຜິດ; ແລະ ຄົນທີ່ຖືກພວກເຂົານຳໄປຍ່ອມຖືກທຳລາຍ.

17 ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງຈະບໍ່ມີຄວາມສຸກໃນຊາຍໜຸ່ມຂອງເຂົາ, ແລະ ທັງບໍ່ມີ [ກ]ເມດຕາສົງສານຕໍ່ລູກກຳພ້າພໍ່ ແລະ ແມ່ໝ້າຍຄົນໃດເລີຍ; ເພາະວ່າທຸກໆຄົນໃນພວກເຂົາເປັນຄົນໜ້າຊື່ໃຈຄົດ, ແລະ ເປັນຄົນເຮັດຊົ່ວ ແລະ ທຸກໆປາກເວົ້າແຕ່ [ຂ]ແນວໂງ່. ເພາະທັງໝົດນີ້ພຣະພິໂລດຂອງພຣະອົງຍັງບໍ່ທັນເຊົາເທື່ອ, ແຕ່ [ຄ]ພຣະຫັດຂອງພຣະອົງຍັງຍື່ນອອກມາ.

18 ເພາະຄວາມຊົ່ວຮ້າຍເຜົາໄໝ້ດັ່ງໄຟ ມັນຈະກືນກິນເຄືອ ແລະ ກົກໜາມ, ແລະ ຈະເກີດໄຟຕາມກໍໄມ້ໃນປ່າ, ແລະ ມັນຈະລຸກລາມຂຶ້ນຄືກັນກັບການພຸ່ງຂຶ້ນຂອງຄວັນ.

19 ດ້ວຍພຣະພິໂລດຂອງຈອມໂຍທາ, ແຜ່ນດິນຈຶ່ງມືດ ແລະ ຜູ້ຄົນຈະເປັນຄືນ້ຳມັນເຊື້ອໄຟ; [ກ]ບໍ່ມີຜູ້ໃດຈະໄວ້ຊີວິດອ້າຍນ້ອງຂອງຕົນເລີຍ.

20 ແລະ ເຂົາຈະຍາດຊີງເອົາມືຂວາ ແລະ ຍັງຫິວໂຫຍຢູ່; ແລະ ເຂົາຈະ [ກ]ກິນ

---

6 ຈ ຢຣ 14:27.
7 ກ ຄມພ ປົກຄອງ, ການປົກຄອງ.
ຂ ດນອ 2:44.
8 ກ ອສ ຂ່າວສານຂອງສາດສະດາທີ່ຕໍ່ຈາກ (ຂໍ້ທີ 8–21) ເປັນ ຄຳເຕືອນຕໍ່ສິບເຜົ່າພາກເໜືອ, ເອີ້ນວ່າ ອິດສະຣາເອນ.
11 ກ 2 ກສ 16:5–9.
12 ກ 2 ກສ 17:6, 18.
ຂ ອຊຢ 5:25; 10:4.
13 ກ ອມ 4:6–12.
17 ກ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
ຂ 2 ນຟ 9:28–29.
ຄ ຢຄ 5:47; 6:4.
19 ກ ມກ 7:2–6.
20 ກ ພບຍ 28:53–57.

ມີຊ້າຍແຕ່ເຂົາຍັງບໍ່ພໍໃຈ; ເຂົາຈະກິນເນື້ອ
ໜັງທີ່ແຂນຂອງຕົນເອງນຳອີກ—
21 [ກ]ມາ ນາ ເຊ, [ຂ]ເອຟະ ຣາອິມ; ແລະ
ເອຟະຣາອິມ, ມານາເຊ; ທັງສອງຈະຮ່ວມ
ກັນ ຕໍ່ ສູ້ [ຄ]ຢູດາ. ເພາະທັງໝົດນີ້ ພຣະພິ
ໂລດຂອງພຣະອົງຍັງບໍ່ທັນເຊົາເທື່ອ, ແຕ່
ພຣະຫັດຂອງພຣະອົງຍັງຍື່ນອອກມາ.

## ບົດທີ 20

*ຄວາມພິນາດຂອງອັດຊີເຣຍເປັນລັກສະນະຂອງຄວາມພິນາດຂອງຄົນຊົ່ວໃນການສະເດັດມາຄັ້ງທີສອງ—ຫລັງຈາກພຣະອົງໄດ້ສະເດັດກັບຄືນມາ ມັນຈະມີຄົນພຽງເລັກໜ້ອຍເຫລືອຢູ່—ຜູ້ທີ່ເຫລືອຢູ່ຂອງຢາໂຄບຈະກັບມາໃນມື້ນັ້ນ—ປຽບທຽບກັບເອຊາຢາ 10. ປະມານ 559–545 ປີ ກ່ອນ ຄ.ສ.*

1 ວິບັດແກ່ຜູ້ທີ່ອອກຄຳສັ່ງອັນບໍ່ຊອບທຳ
ແລະ ຂຽນເລື່ອງທຸກໜັກຊຶ່ງເຂົາກຳນົດຂຶ້ນ;
2 ເພື່ອ ທັນ ຄົນ ຂັດ ສົນ ອອກ ໄປ ຈາກ
[ກ]ການພິພາກສາ, ແລະ ເພື່ອເອົາສິດທິຈາກ
ຄົນທຸກຍາກຂອງຜູ້ຄົນຂອງເຮົາໄປ, ເພື່ອ
[ຂ]ແມ່ໝ້າຍຈະໄດ້ເປັນເຄື່ອງຮັບຮອງຂອງ
ພວກເຂົາ, ແລະ ເພື່ອພວກເຂົາຈະໄດ້ກະ
ທຳໃຫ້ເດັກກຳພ້າພໍ່ເປັນເຫຍື່ອຂອງພວກ
ເຂົາ!
3 ແລະ ພວກເຈົ້າຈະເຮັດແນວໃດໃນວັນ
ແຫ່ງ [ກ]ການມາຢ້ຽມຢາມ ແລະ ໃນຄວາມ
ເປົ່າປ່ຽວທີ່ຈະມາຈາກທາງໄກ? ພວກເຈົ້າ
ຈະໜີໄປເພິ່ງຜູ້ໃດ? ແລະ ຈະຖິ້ມລັດສະໝີ
ພາບຂອງພວກເຈົ້າໄວ້ບ່ອນໃດ?
4 ປາດສະຈາກເຮົາແລ້ວ ພວກເຂົາຈະ
ກົ້ມຫົວລົງໃຫ້ນັກໂທດ, ແລະ ພວກເຂົາຈະ
ລົ້ມຕາຍຢູ່ກັບພວກທີ່ຖືກປະຫານ. ເພາະ
ທັງໝົດນີ້ພຣະພິໂລດຂອງພຣະອົງຍັງບໍ່
ທັນເຊົາເທື່ອ, ແຕ່ພຣະຫັດຂອງພຣະອົງຍັງ
ຍື່ນອອກມາ.
5 ໂອ້ ຊາວອັດຊີເຣຍເອີຍ, ຜູ້ເປັນໄມ້
ຄ້ອນແຫ່ງຄວາມໂມໂຫຂອງເຮົາ ແລະ
ເປັນໄມ້ແສ້ແຫ່ງຄວາມເຄືອງແຄ້ນ [ກ]ຂອງ
ເຂົາ.
6 ເຮົາຈະສົ່ງເຂົາໄປ [ກ]ຕໍ່ສູ້ກັບປະຊາຊາດ
ທີ່ໜ້າຊື່ໃຈຄົດ, ແລະ ເຮົາຈະບັນຊາເຂົາ
ໃຫ້ໄປຕໍ່ສູ້ກັບຜູ້ທີ່ເຮົາພິໂລດເພື່ອຍາດເອົາ
ຂອງທີ່ປຸ້ນມາ ແລະ ເພື່ອຍາດເອົາເຫຍື່ອ
ແລະ ເພື່ອຢຽບຍ່ຳພວກເຂົາລົງຄືກັນກັບຂີ້
ຕົມໃນຖະໜົນ.
7 ແຕ່ເຂົາບໍ່ໄດ້ຕັ້ງໃຈແນວນັ້ນ, ແລະ ໃຈ
ຂອງເຂົາກໍບໍ່ຄິດແນວນັ້ນ; ແຕ່ໃນໃຈຂອງ
ເຂົາ ຄືຈະທຳລາຍ ແລະ ຕັດປະຊາຊາດ
ອອກເສຍບໍ່ແມ່ນພຽງເລັກໜ້ອຍ.
8 ເພາະເຂົາໄດ້ເວົ້າວ່າ: ຜູ້ບັງຄັບບັນຊາ
ຂອງເຮົາເປັນກະສັດໝົດແລ້ວແມ່ນບໍ?
9 ເມືອງການໂນກໍເປັນເມືອງກັກເກມິດ
ແລ້ວແມ່ນບໍ? ເມືອງຮາມັດກໍເປັນເມືອງ
ອາກປັດແລ້ວແມ່ນບໍ? ເມືອງຊາມາເຣຍກໍ
ເປັນເມືອງດາມັສກັດແລ້ວແມ່ນບໍ?
10 ເໝືອນດັ່ງ [ກ]ມືຂອງເຮົາໄປເຖິງບັນດາ
ລາຊາອານາຈັກຂອງຮູບບູຊາ, ຊຶ່ງຮູບຄວັດ
ສະຫລັກຂອງພວກເຂົານັ້ນດີລື່ນຂອງເຢຣູ
ຊາເລັມ ແລະ ຂອງຊາມາເຣຍ;
11 ຈະເປັນໄປບໍ່ໄດ້ບໍວ່າ ເຮົາຈະບໍ່ເຮັດ
ຫຍັງກັບເຢຣູຊາເລັມ ແລະ ຮູບບູຊາຂອງ

21 *ກ* ຄມພ ມານາເຊ.
*ຂ* ຄມພ ເອຟະຣາອິມ.
*ຄ* ຄມພ ຢູດາ (ລູກຊາຍຂອງຢາໂຄບ).

**20** 2 *ກ* ພ ຄວາມຍຸດຕິທຳ.
*ຂ* ຄມພ ແມ່ໝ້າຍ.
3 *ກ* ອສ ການລົງໂທດ.
5 *ກ* ອຊຢ 10:5.
6 *ກ* ອສ ຕໍ່ສູ້ກັບອິດສະຣາເອນ.
10 *ກ* ອສ ກະສັດແຫ່ງອັດຊີເຣຍ (ຂໍ້ທີ 10–11).

ມັນຄືກັນກັບເຮົາໄດ້ເຮັດມາແລ້ວກັບຊາມາ
ເຣຍ ແລະ ຮູບບູຊາຂອງມັນ?
12 ດັ່ງ ນັ້ນ ເຫດ ການ ຈະ ບັງ ເກີດ ຂຶ້ນ ຄື
ເມື່ອອົງພຣະເຈົ້າໄດ້ສຳເລັດພາລະກິດທັງ
ໝົດຂອງພຣະອົງທີ່ພູຊີໂອນ ແລະ ທີ່ເຢຣູ
ຊາເລັມແລ້ວ, ພຣະອົງຈະລົງໂທດ [ກ]ຜົນ
ຂອງໃຈທີ່ອວດດີຂອງກະສັດແຫ່ງ [ຂ]ອັດຊີ
ເຣຍ ແລະ ລັດສະໝີພາບແຫ່ງຄວາມໄຝ່
ສູງຂອງເຂົາ.
13 ເພາະ [ກ]ເຂົາໄດ້ກ່າວວ່າ: ດ້ວຍຄວາມ
ຮຸນແຮງຂອງມືເຮົາ ແລະ ດ້ວຍປັນຍາຂອງ
ເຮົາ, ເຮົາ ຈຶ່ງ ໄດ້ ເຮັດ ສິ່ງ ເຫລົ່າ ນີ້ ຂຶ້ນ ມາ;
ເພາະເຮົາມີຄວາມເຂົ້າໃຈ; ເຮົາຈຶ່ງໄດ້ຍ້າຍ
ເຂດແດນຂອງຜູ້ຄົນ ແລະ ປຸ້ນເອົາຊັບສົມ
ບັດຈາກພວກເຂົາ, ແລະ ເຮົາໄດ້ກົດຂີ່ຜູ້ອາ
ໄສເໝືອນດັ່ງຄົນກ້າ;
14 ແລະ ມືຂອງເຮົາພົບຂອງມີຄ່າຂອງ
ຜູ້ຄົນຄືກັນກັບຮັງນົກ; ແລະ ເຮົາເຕົ້າໂຮມ
ແຜ່ນດິນໂລກໄວ້ ທັງໝົດຄືກັນກັບຄົນເກັບ
ໄຂ່ທີ່ເຫລືອ; ແລະ ບໍ່ມີຜູ້ໃດເໜັງປີກ ຫລື
ເປີດປາກ ຫລື ສົ່ງສຽງ.
15 [ກ]ຂວານ [ຂ]ຈະ ອວດ ອ້າງ ຕົວ ມັນ ເອງ
ກັບຜູ້ທີ່ໃຊ້ມັນບໍ? ເລື່ອຍຈະຫັນຄົມໃສ່ຄົນ
ທີ່ໃຊ້ມັນບໍ? ໄມ້ສ້າວຈະແກວ່ງຕົວມັນເອງ
ໃສ່ຄົນທີ່ຍົກມັນຂຶ້ນບໍ? ຫລື ວ່າໄມ້ຄ້ອນ
ເທົ້າຈະຍົກຕົວມັນຂຶ້ນເອງຄືກັບວ່າບໍ່ແມ່ນ
ໄມ້ບໍ?
16 ສະນັ້ນພຣະຜູ້ເປັນເຈົ້າ, ຈອມໂຍທາ,
ຈະ ສົ່ງ ຄວາມ ຜອມ ແຫ້ງ ມາ ໃນ ບັນ ດາ ຄົນ
ອ້ວນພີຂອງພຣະອົງ; ແລະ ພາຍໃຕ້ [ກ]ລັດ
ສະ ໝີ ພາບ ຂອງ ເຂົາ ພຣະ ອົງ ຈະ ກໍ່ ການ
ເຜົາໄໝ້ຂຶ້ນຄືກັນກັບການເຜົາໄໝ້ຂອງໄຟ.
17 ແລະ ຄວາມ ສະ ຫວ່າງ ຂອງ ອິດ ສະ
ຣາເອນຈະເປັນແສງໄຟ ແລະ ພຣະຜູ້ບໍລິ
ສຸດຂອງເຂົາຈະກາຍເປັນແປວໄຟ ແລະ
ຈະ ເຜົາ ໄໝ້ ແລະ ກືນກິນ ເຄືອ ແລະ ກົກ
ໜາມໃນມື້ດຽວ;
18 ແລະ ຈະ [ກ]ກິນ ລັດ ສະ ໝີ ພາບ ຂອງ
ປ່າໄມ້ຂອງເຂົາ, ແລະ ສວນໝາກໄມ້ຂອງ
ເຂົາ, ທັງຈິດວິນຍານ ແລະ ຮ່າງກາຍ; ແລະ
ເຂົາຈະ ເປັນ ເໝືອນ ເວລາຄົນເຈັບຂູດຊີດ
ລົງໄປ.
19 ແລະ ຕົ້ນ ໄມ້ ທີ່ [ກ]ເຫລືອ ໃນ ປ່າ ຂອງ
ເຂົາ ຈະ ເຫລືອ ຢູ່ ພຽງ ເລັກ ໜ້ອຍ, ຈົນ ວ່າ
ເດັກນ້ອຍຈະນັບໄດ້.
20 ແລະ ເຫດ ການ ຈະ ບັງ ເກີດ ຂຶ້ນ ໃນ
[ກ]ມື້ນັ້ນຄື, ຜູ້ທີ່ເຫລືອຢູ່ຂອງອິດສະຣາເອນ
ແລະ ຄົນ ທີ່ ໂຕນ ໜີໄປ ຂອງ [ຂ]ເຊື້ອສາຍ
ຂອງຢາໂຄບຈະບໍ່ [ຄ]ເພິ່ງພາອາໄສຜູ້ທີ່ຂ້ຽນ
ຕີເຂົາອີກຕໍ່ໄປ, ແຕ່ຈະເພິ່ງພຣະຜູ້ເປັນເຈົ້າ
ພຣະ ຜູ້ ບໍ ລິສຸດຂອງອິດສະຣາເອນດ້ວຍ
ຄວາມຈິງ.
21 [ກ]ຜູ້ທີ່ເຫລືອຢູ່, ແທ້ຈິງແລ້ວ, ແມ່ນຜູ້ທີ່
ເຫລືອຢູ່ຂອງຢາໂຄບ, ຈະກັບມາຫາພຣະ
ເຈົ້າຜູ້ຊົງມີລິດເດດ.
22 ອິດສະຣາເອນ ເອີຍ ເຖິງ ແມ່ນ ວ່າ
ຜູ້ຄົນ ຂອງເຈົ້າຈະ ເປັນຄື ດັ່ງດິນຊາຍ ໃນ
ທະເລ, ເຖິງຢ່າງໃດກໍຕາມ, ມີແຕ່ສ່ວນໜຶ່ງ

12 ກ ອສ ການອວດອ້າງ
ທີ່ຈອງຫອງ.
ຂ ຊຟຢ 2:13.
13 ກ ອສ ກະສັດແຫ່ງອັດຊີ
ເຣຍ (ຂໍ້ທີ 13–14).
15 ກ ອສ ກະສັດແຫ່ງອັດຊີ
ເຣຍສາມາດຮຸ່ງເຮືອງ
ກວ່າພຣະເຈົ້າບໍ?
ຂ ຄຳປຽບທຽບທັງໝົດໃນ
ຂໍ້ນີ້ ຖາມຄຳຖາມຢ່າງ
ດຽວກັນ: ມະນຸດ (ຍົກ
ຕົວຢ່າງ, ກະສັດແຫ່ງ
ອັດຊີເຣຍ) ສາມາດຮຸ່ງ
ເຮືອງກວ່າພຣະເຈົ້າບໍ?
16 ກ ອສ ກະສັດແຫ່ງອັດຊີເຣຍ
(ຂໍ້ທີ 17–19) ນຳອີກ.
18 ກ ອສ ອັດຊີເຣຍຈະ
ສູນຫາຍໄປໝົດ.
19 ກ ອສ ຜູ້ທີ່ເຫລືອຢູ່ຂອງ
ກອງທັບແຫ່ງອັດຊີເຣຍ.
20 ກ ອສ ຍຸກສຸດທ້າຍ.
ຂ ອມ 9:8–9.
ຄ ອສ ເພິ່ງອາໄສ.
21 ກ ອຊຢ 11:11–12.

ທີ່ເຫລືອຢູ່ຂອງເຂົາເທົ່ານັ້ນທີ່ຈະກັບມາ;
[ກ]ການທຳລາຍນັ້ນໄດ້ກຳນົດໄວ້ແລ້ວ ຈະ
[ຂ]ທ່ວມທົ້ນໄປດ້ວຍຄວາມຊອບທຳ.
23 ເພາະອົງພຣະຜູ້ເປັນເຈົ້າຈອມໂຍທາ
ຈະ [ກ]ທຳລາຍ, ເຖິງແມ່ນກຳນົດໄວ້ທົ່ວແຜ່ນ
ດິນ.
24 ສະນັ້ນ, ອົງ ພຣະ ຜູ້ ເປັນ ເຈົ້າ ຈອມ
ໂຍທາໄດ້ກ່າວດັ່ງນີ້: ໂອ້ ຜູ້ຄົນ ຂອງເຮົາ
ເອີຍ ຜູ້ທີ່ຢູ່ໃນຊີໂອນ, ຢ່າ ໄດ້ ຢ້ານກົວ
ຊາວອັດຊີເຣຍເລີຍ; ເຂົາຈະຕີເຈົ້າດ້ວຍ
ໄມ້ຄ້ອນ ແລະ ຍົກໄມ້ແສ້ຂອງເຂົາຂຶ້ນໃສ່
[ກ]ເໝືອນທີ່ໃນເອຢິບ.
25 ເພາະ ຍັງ ອີກ ບໍ່ ນານ ຄວາມ ເຄືອງ
ແຄ້ນຈະຢຸດລົງ, ແລະ ຄວາມພິໂລດຂອງ
ເຮົາຈະມຸ້ງເຖິງການທຳລາຍເຂົາ.
26 ແລະ ຈອມ ໂຍທາຈະໃຫ້ເກີດໄພພິ
ບັດກັບເຂົາດັ່ງທີ່ພຣະອົງໂຈມຕີຄົນຂອງ
[ກ]ມີດີອານທີ່ໜ້າຜາໂອເຣັບ; ແລະ ໄມ້ແສ້
ຂອງພຣະອົງຈະເຄີຍຢູ່ໃນທະເລ ດັ່ງນັ້ນ
ພຣະອົງຈະຍົກມັນຂຶ້ນຢ່າງທີ່ໃນເອຢິບ.
27 ແລະ ເຫດການຈະບັງເກີດຂຶ້ນໃນ
ມື້ນັ້ນຄື [ກ]ພາລະຂອງເຂົາຈະຖືກຍົກອອກ
ຈາກບ່າຂອງເຈົ້າ ແລະ ແອກຂອງເຂົາຈະ
ອອກຈາກຄໍຂອງເຈົ້າ, ແລະ ແອກຈະຖືກ
ທຳລາຍເພາະ [ຂ]ການຊະໂລມ.
28 [ກ]ເຂົາໄດ້ມາຮອດອາອີແລ້ວ, ເຂົາ
ໄດ້ຂ້າມມິກໂລນໄປ; ເຂົາໄດ້ເກັບສະບຽງ
ອາຫານໄວ້ທີ່ມິກມາດ.
29 ເຂົາ ເຫລົ່ານັ້ນ ໄດ້ຜ່ານທາງນັ້ນໄປ
ແລ້ວ; ເຂົາຢຸດພັກທີ່ເກບາ; ຣາມັດຢ້ານກົວ
ຫລາຍ; ກີເບອາຂອງໂຊນໄດ້ໜີໄປແລ້ວ.
30 ໂອ້ ທິດາຂອງການລິມເອີຍ, ຈົ່ງສົ່ງ
ສຽງຂຶ້ນໃຫ້ໄດ້ຍິນໄປຮອດລາອິດເຊີດ, ໂອ້
ອານາທົດທີ່ໜ້າສົງສານເອີຍ.
31 ມັດເມນາໄດ້ຍ້າຍອອກໄປແລ້ວ; ຜູ້
ອາໄສຂອງເກບິມໄດ້ເຕົ້າໂຮມກັນເພື່ອຈະ
ໜີໄປ.
32 ໃນມື້ນັ້ນເອງເຂົາຈະຢຸດຢູ່ທີ່ເມືອງ
ໂນບ, ເຂົາຈະຍົກກຳປັ້ນໃສ່ພູເຂົາຂອງ
ທິດາຂອງຊີໂອນ, ເນີນພູຂອງເຢຣູຊາເລັມ.
33 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າ, ຈອມໂຍທາ
ຈະຕັດກິ່ງງ່າດ້ວຍກຳລັງອັນໜ້າຢ້ານກົວ;
ແລະ ພວກທີ່ [ກ]ສູງຍິ່ງຈະຖືກໂຄ່ນລົງມາ;
ແລະ ພວກທີ່ຈອງຫອງຈະຕ້ອງຖືກເຮັດໃຫ້
ອ່ອນນ້ອມລົງ.
34 ແລະ ພຣະອົງຈະຖາງສຸມໄມ້ໃນປ່າ
ດ້ວຍຂວານ, ແລະ ເລບານອນຈະຕົກໂດຍ
ພຣະຜູ້ມີລິດທານຸພາບ.

## ບົດທີ 21

*ຍາດວົງຂອງເຢຊີ (ພຣະຄຣິດ) ຈະຕັດສິນດ້ວຍຄວາມຊອບທຳ—ຄວາມຮູ້ຂອງພຣະເຈົ້າຈະປົກຄຸມແຜ່ນດິນໂລກພາຍໃນພັນປີ—ພຣະຜູ້ເປັນເຈົ້າຈະຍົກຫລັກສັນຍານຂຶ້ນ ແລະ ເຕົ້າໂຮມອິດສະຣາເອນ—ປຽບທຽບກັບເອຊາຢາ 11. ປະມານ 559–545 ປີກ່ອນ ຄ.ສ.*

22 ກ ຄພ 63:34.
ຄມພ ໂລກ—
ທີ່ສຸດຂອງໂລກ.
ຂ ອສ ເຖິງແມ່ນຕອນທີ່
ການລົງໂທດມາເຖິງ, ແຕ່
ຄວາມເມດຕາຍັງມີໃຫ້ຢູ່.
23 ກ ອສ ເຮັດໃຫ້ຄຳສັ່ງພິນາດ.
24 ກ ອສ ດັ່ງທີ່ຊາວເອຢິບໄດ້
ເຮັດໃນສະໄໝກ່ອນ.
ອພຍ 1:13–14.
26 ກ ປຖກ 25:1–2;
ຜປ 7:25.
27 ກ ອຊຢ 14:25.
ຂ ຄມພ ຜູ້ທີ່ໄດ້ຖືກເຈີມໄວ້.
28 ກ ອສ ຄວາມກ້າວໜ້າ
ຂອງກອງທັບແຫ່ງອັດຊີ
ເຣຍທີ່ເດີນໄປຫາເຢຣູຊາ
ເລັມໄດ້ຖືກສືບຮູ້; ແລ້ວ (ຂໍ້
ທີ 33–34) ການກະທຳຂອງ
ພຣະຜູ້ເປັນເຈົ້າທີ່ຕໍ່ຕ້ານ
ພວກເຂົາ ໄດ້ຖືກບັນຍາຍ
ໄວ້ເປັນຄຳອຸປະມາ.
33 ກ ຣລມ 4:12–13.

1 ແລະ ຈະ ມີ [ກ]ກິ່ງ ໄມ້ ອອກ ມາ ຈາກ
[ຂ]ຍາດວົງຂອງ [ຄ]ເຢຊີ, ແລະ ຮຸ່ນໄມ້ຈະເກີດ
ອອກມາຈາກຮາກຂອງເພິ່ນ.
2 ແລະ [ກ]ພຣະວິນຍານຂອງພຣະຜູ້ເປັນ
ເຈົ້າຈະສະຖິດຢູ່ເທິງເພິ່ນ, ວິນຍານແຫ່ງ
ປັນຍາ ແລະ ຄວາມເຂົ້າໃຈ, ວິນຍານແຫ່ງ
ການແນະນຳ ແລະ ພະລັງ, ວິນຍານແຫ່ງ
ຄວາມຮູ້ ແລະ ແຫ່ງຄວາມຢຳເກງພຣະຜູ້
ເປັນເຈົ້າ;
3 ແລະ ຈະເຮັດໃຫ້ເພິ່ນມີຄວາມເຂົ້າໃຈ
ຢ່າງວ່ອງໄວໃນຄວາມຢ້ານກົວພຣະຜູ້ເປັນ
ເຈົ້າ; ແລະ ເພິ່ນຈະບໍ່ [ກ]ຕັດສິນຕາມສາຍ
ຕາຂອງເພິ່ນ, ທັງຈະບໍ່ຕຳນິຕາມທີ່ຫູຂອງ
ເພິ່ນ ໄດ້ຍິນ.
4 ແຕ່ເພິ່ນຈະຕັດສິນຄົນທຸກຍາກດ້ວຍ
[ກ]ຄວາມຊອບທຳ, ແລະ [ຂ]ຕຳນິດ້ວຍຄວາມ
ທ່ຽງທຳ ເພື່ອ [ຄ]ຄົນໃຈອ່ອນໂຍນຂອງແຜ່ນ
ດິນໂລກ; ແລະ ປ້ອງກັນສິດທິຂອງຜູ້ທີ່ຕ່ຳ
ຕ້ອຍ, ແຜ່ນດິນໂລກຈະຖືກຕີດ້ວຍຄຳສັ່ງ
ຂອງເພິ່ນ, ແລະ ຄົນຊົ່ວກໍຈະຕາຍດ້ວຍຄຳ
ຕັດສິນຂອງເພິ່ນ.
5 ແລະ ຄວາມຊອບທຳຈະເປັນຜ້າຄຽນ
ແອວຂອງເພິ່ນ, ແລະ ຄວາມຊື່ສັດຈະເປັນ
ຜ້າຄຽນ [ກ]ບັ້ນແອວຂອງເພິ່ນ.
6 ໝາປ່າຈະຢູ່ກັບລູກແກະ, ເສືອດາວ
ຈະນອນຢູ່ນຳລູກແບ້, ແລະ ລູກງົວກັບສິງ
ໜຸ່ມ ແລະ ລູກສັດອ້ວນ ຈະຢູ່ດ້ວຍກັນ;
ແລະ ເດັກນ້ອຍຄົນໜຶ່ງຈະນຳພວກມັນ
ໄປ.
7 ແລະ ງົວແມ່ກັບໝີຈະກິນນຳກັນ; ລູກ
ຂອງພວກມັນກໍຈະນອນຢູ່ນຳກັນ; ແລະ
ສິງຈະກິນເຟືອງເຂົ້າຄືກັນກັບງົວເຖິກ.
8 ແລະ ເດັກນ້ອຍກິນນົມຈະຫລິ້ນໃນຮູ
ຂອງ [ກ]ງູພິດ, ແລະ ເດັກນ້ອຍທີ່ເຊົານົມ ຈະ
ວາງມືຂອງເຂົາໃນກົງ [ຂ]ງູຮ້າຍ.
9 ພວກມັນຈະ [ກ]ບໍ່ທຳຮ້າຍ ຫລື ທຳລາຍ
ໄປທົ່ວພູເຂົາອັນສັກສິດຂອງເຮົາ ເພາະ
ແຜ່ນດິນໂລກຈະເຕັມໄປ [ຂ]ດ້ວຍຄວາມຮູ້
ກ່ຽວກັບພຣະຜູ້ເປັນເຈົ້າເໝືອນດັ່ງທະເລທີ່
ເຕັມໄປດ້ວຍນ້ຳ.
10 ແລະ ໃນ [ກ]ມື້ນັ້ນກະສັດອົງໃໝ່ຈາກ
[ຂ]ຍາດວົງຂອງເຢຊີຈະເປັນສັນຍາລັກຂອງ
ຊົນຊາດທັງຫລາຍ; [ຄ]ຄົນຕ່າງຊາດຈະ
ສະແຫວງຫາ [ງ]ມັນ; ແລະ ການພັກຜ່ອນ
ຂອງເພິ່ນຈະມີລັດສະໝີພາບ.
11 ແລະ ເຫດການຈະບັງເກີດຂຶ້ນໃນ
ມື້ນັ້ນຄື ພຣະເຈົ້າຈະວາງພຣະຫັດລົງອີກ
ເປັນເທື່ອ [ກ]ທີສອງ ເພື່ອນຳເອົາຜູ້ຄົນຂອງ
ພຣະອົງທີ່ຍັງເຫລືອຢູ່ກັບມາຈາກອັດຊີ
ເຣຍ, ແລະ ຈາກເອຢິບ, ແລະ ຈາກປັດໂຣ,
ແລະ ຈາກກູເຊ, ແລະ ຈາກເອລາມ, ແລະ
ຈາກຊີນາ, ແລະ ຈາກຮາມັດ, ແລະ ຈາກ
ເກາະໃນທະເລ.
12 ແລະ ພຣະ ອົງ ຈະ ຕັ້ງ [ກ]ຫລັກ ສັນ

**21** 1 *ກ* ຄພ 113:3–4.
*ຂ* ຄພ 113:1–2.
*ຄ* ເຢຊີແມ່ນບິດາຂອງ ດາວິດ; ມີຂໍ້ມູນບອກໄວ້ກ່ຽວກັບເຊື້ອສາຍຂອງກະສັດດາວິດ ຊຶ່ງຕໍ່ມາພຣະເຢຊູໄດ້ກຳເນີດຈາກເຊື້ອສາຍນີ້.
ມທ 5:2;
ຮຣ 7:14.
ຄມພ ເຢຊີ.
2 *ກ* ອຊຢ 61:1–3.
3 *ກ* ຢຮ 7:24.
4 *ກ* ພສສ 72:2–4;
ມຊຢ 29:12.
*ຂ* ເຮັບເຣີ ຊີ້ຂາດ.
*ຄ* ຄມພ ອ່ອນໂຍນ,
ຄວາມອ່ອນໂຍນ.
5 *ກ* ພ ແອວ.
8 *ກ* ງູນ້ອຍທີ່ມີພິດຢູ່ປະເທດເອຢິບ.
*ຂ* ງູທີ່ມີພິດອີກໂຕໜຶ່ງ.
9 *ກ* ອຊຢ 2:4.
ຄມພ ພັນປີ.
*ຂ* ຄພ 101:32–33; 130:9.
10 *ກ* ອສ ຍຸກສຸດທ້າຍ.
ຈສ—ປ 1:40.
*ຂ* ຣມ 15:12;
ຄພ 113:5–6.
*ຄ* ຄພ 45:9–10.
*ງ* ພ ຫາເພິ່ນ.
11 *ກ* 2 ນຟ 6:14; 25:17; 29:1.
12 *ກ* ຄມພ ປ້າຍສັນຍານ.

ຍານຂຶ້ນໃຫ້ແກ່ປະຊາຊາດ ແລະ ຈະຊຸມ
ນຸມອິດສະຣາເອນທີ່ [ຂ]ຖືກຂັບໄລ່ອອກໄປ
ແລະ [ຄ]ເຕົ້າໂຮມຄົນຂອງຢູດາທີ່ກະຈັດກະ
ຈາຍໄປເພື່ອເຂົ້າມາຈາກສີ່ທິດຂອງແຜ່ນ
ດິນໂລກ.
13 ແລະ [ກ]ຄວາມ ອິດ ສາ ຂອງ ເອຟະ
ຣາອິມຈະໝົດໄປ, ແລະ ຜູ້ປໍລະປັກຂອງ
ຢູດາຈະຖືກຕັດອອກ; [ຂ]ເອຟະຣາອິມຈະບໍ່
ອິດສາ [ຄ]ຢູດາ, ແລະ ຢູດາຈະບໍ່ລົບກວນ
ເອຟະຣາອິມ.
14 ແຕ່ພວກເຂົາຈະ [ກ]ບິນລົງທີ່ບ່າຂອງ
ຟີລິດສະຕິນທາງຕາເວັນຕົກ; ພວກເຂົາຈະ
ຮ່ວມກັນປຸ້ນທາງຕາເວັນອອກ; ພວກເຂົາ
ຈະຍຶດເອົາເອໂດມ ແລະໂມອາບ; ແລະ
ລູກຫລານຂອງອຳໂມນຈະເຊື່ອຟັງພວກ
ເຂົາ.
15 ແລະ ພຣະຜູ້ເປັນເຈົ້າຈະ [ກ]ທຳລາຍ
ລີ້ນ ຂອງທະເລເອຢິບໃຫ້ໝົດສິ້ນ; ແລະ
ດ້ວຍລົມອັນມີລິດເດດຂອງພຣະອົງ, ພຣະ
ອົງຈະຍົກພຣະຫັດເທິງແມ່ນ້ຳ ແລະ ຈະຕີ
ມັນໃຫ້ເປັນຮ່ອງນ້ຳເຈັດສາຍ ແລະ ໃຫ້ຄົນ
ຂ້າມໄປໄດ້ໂດຍຕີນບໍ່ປຽກ.
16 ແລະ ຈະມີ [ກ]ທາງຫລວງຈາກອັດຊີ
ເຣຍສຳລັບຜູ້ຄົນຂອງພຣະອົງທີ່ຍັງເຫລືອ
ຢູ່ດັ່ງທີ່ມີຢູ່ສຳລັບອິດສະຣາເອນໃນວັນທີ່
ພວກເຂົາຂຶ້ນມາຈາກແຜ່ນດິນເອຢິບ.

## ບົດທີ 22

*ພາຍໃນພັນປີມະນຸດທຸກຄົນຈະສັນລະເສີນພຣະຜູ້ເປັນເຈົ້າ—ພຣະອົງຈະຢູ່ໃນບັນດາພວກເຂົາ—ປຽບທຽບກັບເອຊາຢາ 12. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ໃນມື້ນັ້ນທ່ານຈະກ່າວວ່າ: ໂອ້
ພຣະຜູ້ເປັນເຈົ້າ, ຂ້ານ້ອຍຈະສັນລະເສີນ
ພຣະອົງ; ເຖິງແມ່ນວ່າ ພຣະອົງຈະພຣະພິ
ໂລດໃຫ້ຂ້ານ້ອຍກໍຕາມ ພຣະພິໂລດຂອງ
ພຣະອົງຍັງຫັນກັບໄປ, ແລະ ພຣະອົງປອບ
ໃຈຂ້ານ້ອຍ.
2 ຈົ່ງ ເບິ່ງ, ພຣະ ເຈົ້າ ເປັນ ຄວາມ ລອດ
ຂອງຂ້ານ້ອຍ; ຂ້ານ້ອຍຈະ [ກ]ວາງໃຈ ແລະ
ຈະບໍ່ຢ້ານກົວເພາະພຣະຜູ້ເປັນເຈົ້າ [ຂ]ພຣະ
ເຢໂຮວາ ເປັນກຳລັງຂອງຂ້ານ້ອຍ ແລະ
ບົດເພງຂອງຂ້ານ້ອຍ; ແລະ ພຣະອົງເປັນ
ຄວາມລອດຂອງຂ້ານ້ອຍອີກ.
3 ສະນັ້ນ, ດ້ວຍຄວາມສຸກ ທ່ານຈະຕັກ
[ກ]ນ້ຳຈາກບໍ່ແຫ່ງຄວາມລອດ.
4 ແລະ ໃນມື້ນັ້ນທ່ານຈະກ່າວວ່າ: ຈົ່ງ
[ກ]ສັນລະເສີນພຣະຜູ້ເປັນເຈົ້າ, ຈົ່ງຮ້ອງທູນ
ໃນພຣະນາມຂອງພຣະອົງ, ຈົ່ງປະກາດ
ການກະທຳຂອງພຣະອົງໃຫ້ບັນດາຜູ້ຄົນ
ທັງຫລາຍ, ຈົ່ງກ່າວວ່າພຣະນາມຂອງພຣະ
ອົງສູງສົ່ງ.

---

12 *ຂ* 3 ນຟ 15:15; 16:1–4.
*ຄ* ນມຢ 1:9; 1 ນຟ 22:10–12; ຄພ 45:24–25. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
13 *ກ* ຢມຢ 3:18.
*ຂ* ເຜົ່າທີ່ຖືກນຳພາໂດຍຢູດາ ແລະ ເອຟະຣາອິມ ເປັນສັດຕູກັນທາງປະຫວັດສາດ (ຫລັງຈາກເຫດການທີ່ໄດ້ເກີດຂຶ້ນໃນ 1 ກສ 12:16–20). ໃນຍຸກສຸດທ້າຍ ຄວາມເປັນສັດຕູກັນນີ້ ຈະໄດ້ຮັບການປິ່ນປົວ. ອຊກ 37:16–22. ຄມພ ອິດສາ.
*ຄ* ຄມພ ຢູດາ (ລູກຊາຍຂອງຢາໂຄບ).
14 *ກ* ອສ ໂຈມຕີຄ້ອຍພູທາງຕາເວັນຕົກ ທີ່ເປັນເຂດຂອງຊາວຟີລິດສະຕິນ.
15 *ກ* ຊກຢ 10:11.
16 *ກ* ອຊຢ 35:8; ຄພ 133:27.
**22** 2 *ກ* ມຊຢ 4:6; ຣລມ 12:1.
*ຂ* ອພຢ 15:2; ພສສ 83:18. ຄມພ ເຢໂຮວາ.
3 *ກ* ຄມພ ນ້ຳທີ່ປະກອບດ້ວຍຊີວິດ.
4 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.

5 ຈົ່ງ [ກ]ຮ້ອງເພງສັນລະເສີນພຣະຜູ້ເປັນ
ເຈົ້າ; ພຣະອົງຈະເຮັດສິ່ງທີ່ດີເລີດໃຫ້ເລື່ອງ
ນີ້ຮູ້ກັນທົ່ວໄປໃນແຜ່ນດິນໂລກ.
6 ຜູ້ອາໄສຂອງຊີໂອນເອີຍ, ຈົ່ງ [ກ]ຮ້ອງໂຮ
ແລະ ຮ້ອງເພງດ້ວຍຄວາມຊື່ນບານ; ເພາະ
ພຣະຜູ້ບໍລິສຸດຂອງອິດສະຣາເອນນັ້ນຍິ່ງ
ໃຫຍ່ໃນທ່າມກາງຂອງພວກເຂົາ.

## ບົດທີ 23

*ຄວາມພິນາດຂອງບາບີໂລນເປັນລັກສະນະຂອງຄວາມພິນາດໃນການສະເດັດມາຄັ້ງທີສອງ—ມັນຈະເປັນວັນແຫ່ງພຣະພິໂລດ ແລະ ການແກ້ແຄ້ນ—ບາບີໂລນ (ໂລກມະນຸດ) ຈະຕົກຕະຫລອດໄປ—ປຽບທຽບກັບເອຊາຢາ 13. ປະມານ 559–545 ປີ ກ່ອນ ຄ.ສ.*

1 [ກ]ພາລະຂອງ [ຂ]ບາບີໂລນ ຊຶ່ງເອຊາຢາ
ລູກຊາຍຂອງອາໂມດໄດ້ເຫັນ.
2 ເຈົ້າຈົ່ງຍົກ [ກ]ທຸງຂຶ້ນເທິງພູເຂົາອັນສູງ
ເຖີດ, ຈົ່ງເປັ່ງສຽງໃຫ້ເຖິງພວກເຂົາ, [ຂ]ຈົ່ງ
ສັ່ນມື, ເພື່ອພວກເຂົາຈະເຂົ້າໄປໃນປະຕູ
ຂອງຜູ້ທີ່ມີກຽດ.
3 ເຮົາບັນຊາ [ກ]ຜູ້ທີ່ໄດ້ຮັບການຊໍາລະໃຫ້
ບໍລິສຸດຂອງເຮົາແລ້ວ, ເຮົາໄດ້ເອີ້ນຜູ້ທີ່ຍິ່ງ
ໃຫຍ່ຂອງເຮົາ, ເພາະຄວາມໂມໂຫຂອງ
ເຮົາບໍ່ໄດ້ຢູ່ກັບພວກເຂົາຜູ້ທີ່ປິຕິຍິນດີໃນ
ຄວາມສູງສົ່ງຂອງເຮົາ.
4 ສຽງອຶກກະທຶກຂອງຝູງຊົນໃນພູເຂົາ
ເໝືອນດັ່ງສຽງຂອງຜູ້ຄົນທີ່ຍິ່ງໃຫຍ່, ເປັນ
ສຽງກຶກກ້ອງຂອງ [ກ]ອານາຈັກຂອງປະຊາ
ຊາດທີ່ມາ [ຂ]ຮວມຕົວ, ຈອມໂຍທາໄດ້ລະ
ດົມກອງທັບເພື່ອສົງຄາມ.
5 ພວກເຂົາທັງຫລາຍມາຈາກປະເທດທີ່
ຢູ່ຫ່າງໄກຈາກບ່ອນສຸດແຫ່ງສະຫວັນ, ແທ້
ຈິງແລ້ວ, ພຣະຜູ້ເປັນເຈົ້າ, ແລະ ອາວຸດ
ແຫ່ງຄວາມເຄືອງແຄ້ນຂອງພຣະອົງຈະທໍາ
ລາຍແຜ່ນດິນທັງໝົດ.
6 ເຈົ້າຈົ່ງຄວນຄາງເພາະວັນຂອງພຣະ
ຜູ້ເປັນເຈົ້າໃກ້ເຂົ້າມາເຖິງແລ້ວ; ມັນຈະ
ມາຄືກັນກັບຄວາມພິນາດຈາກອົງຊົງລິດ
ອໍານາດຍິ່ງໃຫຍ່.
7 ສະນັ້ນ ທຸກໆມືຈະອ່ອນເພຍລົງ ແລະ
ໃຈຂອງຄົນກໍອ່ອນລົງ;
8 ແລະ ພວກເຂົາຈະຢ້ານກົວ; ຄວາມ
ປວດ ແລະ ຄວາມເສົ້າສະຫລົດໃຈຈະ
ຄອບງໍາພວກເຂົາ; ພວກເຂົາຈະເບິ່ງໜ້າ
ກັນຢ່າງຕົກຕະລຶງ; ໜ້າຂອງພວກເຂົາຈະ
ເປັນຄືແປວໄຟ.
9 ຈົ່ງເບິ່ງ, ວັນຂອງພຣະຜູ້ເປັນເຈົ້າຈະ
ມາເຖິງ, ຄວາມໂຫດຮ້າຍພ້ອມທັງພຣະພິ
ໂລດ ແລະ ຄວາມແຄ້ນເຄືອງ ຢ່າງຮຸນແຮງ
ທີ່ຈະປ່ອຍໃຫ້ແຜ່ນດິນໂລກຮ້າງເປົ່າ; ແລະ
ພຣະອົງຈະ [ກ]ທໍາລາຍຄົນບາບທີ່ຢູ່ໃນນັ້ນ
ໃຫ້ໝົດສິ້ນ.
10 ເພາະ ດາວ ແຫ່ງ ສະຫວັນ ແລະ ໝູ່
ດາວທີ່ຢູ່ໃນນັ້ນຈະບໍ່ໃຫ້ແສງສະຫວ່າງ;
[ກ]ດວງຕາເວັນຈະມືດດັບ ແລະ ບໍ່ສ່ອງແສງ

5 *ກ* ຄພ 136:28.
6 *ກ* ອຊຢ 54:1; ຊຟຢ 3:14.
**23** 1 *ກ* ອສ ຂ່າວສານເຖິງຄວາມພິນາດ.
*ຂ* ຄວາມພິນາດແຫ່ງປະຫວັດສາດຂອງບາບີໂລນທີ່ຊົ່ວຮ້າຍ, ມີທໍານາຍຢູ່ໃນອຊຢ 13 ແລະ 14, ເປັນແບບຢ່າງຂອງຄວາມພິນາດສຸດທ້າຍຂອງໂລກທີ່ຊົ່ວຮ້າຍທັງໝົດ. ຄພ 133:5, 7, 14. ຄມພ ບາເບນ, ບາບີໂລນ.
2 *ກ* ພ ປ້າຍສັນຍານ. ຄມພ ປ້າຍສັນຍານ.
*ຂ* ອສ ໂບກມື, ໃຫ້ສັນຍານ.
3 *ກ* ອສ ໄພ່ພົນຂອງພຣະເຈົ້າ.
4 *ກ* ຊກຢ 14:2–3.
*ຂ* ຊກຢ 12:3.
9 *ກ* ຄມພ ແຜ່ນດິນໂລກ—ການຊໍາລະລ້າງແຜ່ນດິນໂລກ.
10 *ກ* ຄມພ ໂລກ—ທີ່ສຸດຂອງໂລກ.

ຂອງມັນອອກໄປ, ແລະ ເດືອນຈະບໍ່ໃຫ້
ແສງສະຫວ່າງຂອງມັນສ່ອງລົງມາ.
11 ແລະ ເຮົາຈະ [ກ]ລົງໂທດໂລກເພາະ
ຄວາມ ຊົ່ວ, ແລະ ຄົນຊົ່ວເພາະຄວາມ
ຊົ່ວຮ້າຍຂອງພວກເຂົາ; ເຮົາຈະເຮັດໃຫ້
[ຂ]ຄວາມອວດດີຂອງຄົນຈອງຫອງຢຸດລົງ
ແລະ ຢັບຢັ້ງຄວາມຖືຕົວຂອງຄົນຊົ່ວ.
12 ເຮົາຈະເຮັດໃຫ້ຊອກຫາ [ກ]ຄົນຜູ້ໜຶ່ງ
ຍາກກວ່າຫາຄຳແນວດີ; ແລະ ຫາມະນຸດ
ຍາກກວ່າຫາຄຳຂອງໂອເຟຍ.
13 ສະນັ້ນ, ເຮົາຈະເຮັດໃຫ້ຟ້າສະຫວັນ
ສັ່ນສະເທືອນ, ແລະ ແຜ່ນດິນໂລກຈະ
[ກ]ເຄື່ອນຍ້າຍຈາກບ່ອນຂອງມັນ ໃນພຣະ
ພິໂລດຂອງຈອມໂຍທາ ແລະ ໃນວັນແຫ່ງ
ຄວາມຄຽດແຄ້ນຂອງພຣະອົງ.
14 ແລະ ມັນຈະເປັນຄືກວາງທີ່ຖືກຕາມ
ລ່າ, ແລະ ຄືກັນກັບແກະທີ່ບໍ່ມີຜູ້ລ້ຽງ; ແລະ
ພວກເຂົາທຸກຄົນຈະຫັນໄປຫາຜູ້ຄົນຂອງ
ຕົນເອງ, ແລະ ທຸກຄົນຈະໜີໄປໃນແຜ່ນ
ດິນຂອງຕົນເອງ.
15 ທຸກ ຄົນ ທີ່ ອວດ ດີ ຈະ ຖືກ ແທງ ໃຫ້
ຊອດ; ແທ້ຈິງແລ້ວ, ແລະ ທຸກຄົນທີ່ເຂົ້າ
ຮ່ວມກັບຄົນຊົ່ວຈະລົ້ມຕາຍ ດ້ວຍຄົມດາບ.
16 ລູກຂອງພວກເຂົາຈະຖືກຫັ່ນເປັນ
ຕ່ອນໄປຕໍ່ໜ້າຂອງພວກເຂົາ; ເຮືອນຊານ
ຂອງພວກເຂົາຈະຖືກປຸ້ນ ແລະ ເມຍຂອງ
ພວກເຂົາຈະຖືກຂົ່ມຂືນ.
17 ຈົ່ງເບິ່ງ, ເຮົາຈະຍຸຍົງໃຫ້ຊາວເມເດຍ
ມາສູ້ກັບພວກເຂົາ ຊຶ່ງຈະບໍ່ເຫັນແກ່ເງິນ
ແລະ ຄຳ, ທັງບໍ່ຫ່ວງໃຍໃນມັນ.
18 ຄັນທະນູຂອງພວກເຂົາຈະສັງຫານ
ຊາຍໜຸ່ມ; ແລະ ພວກເຂົາຈະບໍ່ມີຄວາມ
ສົງສານຕໍ່ລູກຈາກອຸທອນກ້ອນເລືອດ;
ຕາຂອງພວກເຂົາຈະບໍ່ໄວ້ຊີວິດຂອງເດັກ
ນ້ອຍເລີຍ.
19 ແລະ ບາບີໂລນຊຶ່ງຮຸ່ງເຮືອງໃນອາ
ນາຈັກ, ເມືອງທີ່ [ກ]ສະຫງ່າງາມ ແລະ ເປັນ
ທີ່ພູມໃຈຂອງຊາວເຄນເດຍຈະເປັນດັ່ງ
[ຂ]ເມືອງໂຊໂດມກັບເມືອງໂກໂມຣາທີ່ພຣະ
ຜູ້ເປັນເຈົ້າໄດ້ໂຄ່ນລົ້ມມາແລ້ວ.
20 ແລະ ມັນຈະບໍ່ເປັນ [ກ]ບ່ອນຢູ່ອາໄສ,
ທັງຈະບໍ່ເປັນບ່ອນຢູ່ຈາກລຸ້ນສູ່ລຸ້ນ: ທັງ
ຊາວອາຣາເບຍຈະບໍ່ຕັ້ງທັບອາໄສໃນບ່ອນ
ນັ້ນ; ທັງບໍ່ມີຜູ້ລ້ຽງຄົນໃດທີ່ຈະໃຫ້ແກະ
ຂອງຕົນນອນລົງຢູ່ທີ່ນັ້ນ.
21 ແຕ່ສັດ [ກ]ປ່າຂອງທະເລຊາຍຈະນອນ
ຢູ່ທີ່ນັ້ນ; ແລະ ເຮືອນຊານຂອງພວກເຂົາ
ຈະເຕັມໄປດ້ວຍສັດທີ່ຫອນ; ແລະ ນົກເຄົ້າ
ຈະອາໄສຢູ່ບ່ອນນັ້ນ, ແລະ [ຂ]ຜີສາດຈະກະ
ໂດດເຕັ້ນຢູ່ບ່ອນນັ້ນ.
22 ແລະ ສັດປ່າຂອງເກາະຈະຫອນຢູ່ໃນ
[ກ]ເຮືອນຊານເປົ່າປ່ຽວຂອງເມືອງນັ້ນ, ແລະ
[ຂ]ມັງກອນຈະຢູ່ໃນວັງອັນໜ້າແສນສຸກຂອງ
ພວກເຂົາ; ແລະ ວັນເວລາຂອງມັນກໍໃກ້
ເຂົ້າມາແລ້ວ; ແລະ ວັນເວລາຂອງມັນຈະບໍ່
ໃຫ້ຍືດຍາວໄປ. ເພາະເຮົາຈະທຳລາຍມັນ
ຢ່າງວ່ອງໄວ; ແທ້ຈິງແລ້ວ, ເຮົາຈະເມດຕາ
ຜູ້ຄົນຂອງເຮົາ, ແຕ່ວ່າຄົນຊົ່ວຈະຕ້ອງຕາຍ.

## ບົດທີ 24

*ອິດສະຣາເອນຈະເຕົ້າໂຮມກັນ ແລະ ຈະ*

11 *ກ* ມລກ 4:1.
*ຂ* ຄພ 64:24.
12 *ກ* ອຊຢ 4:1–4.
13 *ກ* ຄມພ ແຜ່ນດິນໂລກ—ພາວະສຸດທ້າຍຂອງແຜ່ນດິນໂລກ.
19 *ກ* ອສ ຄວາມໂອ້ອວດ.
*ຂ* ປຖກ 19:24–25; ພບຍ 29:23; 2 ນຟ 13:9.
20 *ກ* ຢມຢ 50:3, 39–40.
21 *ກ* ອຊຢ 34:14–15.
*ຂ* ເຮັບເຣີ ຝູງແບ້, ວິນຍານຮ້າຍ.
22 *ກ* ເຮັບເຣີ ພະລາຊະວັງ.
*ຂ* ເຮັບເຣີ (ບາງທີ) ໝາໄນ, ຫລື ໝາປ່າ.

*ຊື່ນຊົມກັບການພັກຜ່ອນໃນພັນປີ—ລູຊິເຟີໄດ້ຖືກຂັບໄລ່ອອກຈາກສະຫວັນຍ້ອນການກະບົດ—ອິດສະ ຣາເອນຈະເອົາຊະນະບາບີໂລນ (ແຜ່ນດິນໂລກ)—ປຽບທຽບກັບເອຊາຢາ 14. ປະມານ 559–545 ປີກ່ອນ ຄ.ສ.*

1 ເພາະ ພຣະ ຜູ້ ເປັນ ເຈົ້າ ຈະ ເມດ ຕາ ຕໍ່ຢາໂຄບ ແລະ ຈະຍັງ [ກ]ເລືອກ ອິດສະ ຣາເອນໄວ້ອີກ, ແລະ ຈະຕັ້ງເຂົາທັງຫລາຍໄວ້ໃນແຜ່ນດິນຂອງເຂົາເອງ, ແລະ [ຂ]ຄົນແປກໜ້າຈະສົມທົບເຂົ້າກັບເຂົາ ແລະ ເຂົາຈະຕິດພັນຢູ່ກັບເຊື້ອສາຍຂອງຢາໂຄບ.

2 [ກ]ແລະ ຊົນຊາດທັງຫລາຍຈະຮັບເຂົາ ແລະ ນຳເຂົາທັງຫລາຍໄປຫາບ່ອນຂອງເຂົາ; ແທ້ຈິງແລ້ວ, ຈາກບ່ອນໄກໄປຫາທີ່ສຸດຂອງແຜ່ນດິນໂລກ; ແລະ ເຂົາຈະກັບມາຫາ [ຂ]ແຜ່ນດິນແຫ່ງຄຳສັນຍາຂອງເຂົາ. ແລະ ເຊື້ອສາຍອິດສະຣາເອນຈະມີກຳມະສິດໃນເຂົາ, ເປັນ [ຄ]ທາດຊາຍຍິງໃນແຜ່ນດິນຂອງພຣະຜູ້ເປັນເຈົ້າ; ຜູ້ທີ່ຈັບເຂົາເປັນຊະເລີຍຈະຖືກເຂົາຈັບໄປເປັນຊະເລີຍ; ແລະ ເຂົາຈະປົກຄອງຜູ້ທີ່ເຄີຍບີບບັງຄັບເຂົາ.

3 ແລະ ເຫດການຈະບັງເກີດຂຶ້ນໃນມື້ນັ້ນ ຄື ພຣະຜູ້ເປັນເຈົ້າຈະໃຫ້ເຈົ້າ [ກ]ພັກຜ່ອນຈາກຄວາມເສົ້າສະຫລົດໃຈຂອງເຈົ້າ, ແລະ ຈາກຄວາມຢ້ານກົວຂອງເຈົ້າ, ແລະ ຈາກຄວາມເປັນທາດທີ່ລຳບາກໃນບ່ອນຊຶ່ງເຈົ້າຖືກບັງຄັບໃຫ້ຮັບໃຊ້.

4 ແລະ ເຫດການຈະບັງເກີດຂຶ້ນໃນມື້ນັ້ນຄື, ເຈົ້າຈະຍົກຄຳຫຍໍ້ຫຍັນນີ້ກ່າວຕໍ່ກະສັດແຫ່ງ [ກ]ບາບີໂລນວ່າ: ຜູ້ບີບບັງຄັບກໍສະຫງົບໄປແລ້ວບໍ, ເມືອງຄຳກໍສະຫງົບໄປດ້ວຍ!

5 ພຣະຜູ້ເປັນເຈົ້າໄດ້ຫັກໄມ້ແສ້ຂອງຄົນຊົ່ວ, ໄດ້ປາບຄາຖາຂອງຜູ້ປົກຄອງແລ້ວ.

6 ຄົນ ທີ່ ຂ້າ ຟັນ ຜູ້ ຄົນ ໂດຍ ການ ຊຸ້ມ ຕີ ດ້ວຍຄວາມໂມໂຫຂອງຕົນ, ຄົນທີ່ປົກຄອງປະຊາຊາດດ້ວຍຄວາມຄຽດແຄ້ນຈຶ່ງຖືກຂົ່ມເຫັງ ແລະ ບໍ່ມີໃຜຂັດຂວາງ.

7 ທັງແຜ່ນດິນໂລກກຳລັງພັກຜ່ອນ ແລະ ມິດງຽບ; ເຂົາເປັ່ງສຽງ [ກ]ຮ້ອງເພງ.

8 ແທ້ ຈິງ ແລ້ວ, [ກ]ຕົ້ນ ສົນ ຊື່ນ ຊົມ ເຈົ້າ, ແລະ ຕົ້ນສີດາແຫ່ງເລບານອນນຳອີກ, ກ່າວວ່າ: ເພາະວ່າເຈົ້າ [ຂ]ໂຄ່ນລົ້ມແລ້ວກໍບໍ່ມີ [ຄ]ຄົນຕັດໄມ້ຂຶ້ນມາໂຄ່ນພວກເຮົາ.

9 [ກ]ນະລົກທາງລຸ່ມກໍຕື່ນເຕັ້ນເພື່ອຕ້ອນຮັບເຈົ້າ ເມື່ອເຈົ້າມາ ມັນປຸກໃຫ້ [ຂ]ຜີທຸກໂຕມາຕ້ອນຮັບເຈົ້າ; ຄືຜູ້ຊຶ່ງເຄີຍເປັນຜູ້ນຳຂອງໂລກ, ມັນເຮັດໃຫ້ບັນດາຜູ້ເຄີຍເປັນກະສັດແຫ່ງປະຊາຊາດທັງຫລາຍລຸກຂຶ້ນມາຈາກບັນລັງຂອງເຂົາ.

10 ເຂົາທັງໝົດຈະເວົ້າ ແລະ ກ່າວກັບເຈົ້າວ່າ: ເຈົ້າກໍອ່ອນແອຄືພວກເຮົາບໍ? ເຈົ້າກາຍມາເປັນຄືກັນກັບພວກເຮົາແລ້ວບໍ?

11 ຄວາມໂອ້ອວດຂອງເຈົ້າຖືກນຳລົງມາສູ່ຫລຸມຝັງສົບ; ບໍ່ມີຜູ້ໃດໄດ້ຍິນສຽງພິນຂອງເຈົ້າ; ໂຕໜອນຈະເປັນເສື່ອນອນຂອງເຈົ້າ, ແລະ ໂຕໜອນຈະເປັນຜ້າຫົ່ມຂອງເຈົ້າ.

12 ເຈົ້າຕົກຈາກສະຫວັນ [ກ]ໄດ້ຢ່າງໃດ,

**24** 1 *ກ* ຊກຍ 1:17.
*ຂ* ອຊຍ 60:3–5, 10.
2 *ກ* ອສ ປະຊາຊາດອື່ນໆຈະຊ່ວຍເຫລືອອິດສະຣາເອນ.
*ຂ* ຄມພ ແຜ່ນດິນແຫ່ງຄຳສັນຍາ.
*ຄ* ອຊຍ 60:14.
3 *ກ* ຢຊ 1:13; ຄພ 84:24.
4 *ກ* ຄມພ ບາເບນ, ບາບີໂລນ.
7 *ກ* ອຊຍ 55:12.
8 *ກ* ເຮັບເຣີ ຕົ້ນແປກ.
*ຂ* ອສ ຕາຍ.
*ຄ* ເຮັບເຣີ ຄົນຕັດ (ຕົ້ນໄມ້) ບໍ່ໄດ້ມາໂຄ່ນພວກເຮົາ.
9 *ກ* ຄມພ ນະລົກ.
*ຂ* ອສ ວິນຍານທີ່ເລື່ອນລອຍ.
12 *ກ* ຄພ 76:26.

ໂອ້ [ຂ]ລູຊິເຟີ, ໂອລົດແຫ່ງເວລາເຊົ້າ! ເຈົ້າ
ຖືກຕັດລົງສູ່ພື້ນດິນ ຊຶ່ງເຮັດໃຫ້ປະຊາຊາດ
ອ່ອນແອ.
13 ເພາະເຈົ້າໄດ້ກ່າວຢູ່ໃນໃຈວ່າ: [ກ]ເຮົາ
ຈະຂຶ້ນໄປສະຫວັນ, ເຮົາຈະເຊີດຊູບັນລັງ
ຂອງເຮົາເໜືອດວງດາວທັງຫລາຍຂອງ
ພຣະເຈົ້າ; ເຮົາຈະນັ່ງຢູ່ເໜືອເຫລົ່າທູດທີ່
ມາຊຸມນຸມ, ໃນແດນໄກຂອງ [ຂ]ທິດເໜືອນຳ
ອີກ;
14 ເຮົາຈະຂຶ້ນໄປເໜືອຄວາມສູງຂອງ
ເມກ; ເຮົາຈະເຮັດໃຫ້ຕົວເຮົາເອງເໝືອນ
ອົງຜູ້ສູງສົ່ງ.
15 ແຕ່ເຈົ້າຖືກນຳລົງມາສູ່ນະລົກ, ລົງມາ
ສູ່ [ກ]ເຫວ.
16 ບັນດາຜູ້ທີ່ເຫັນເຈົ້າຈະ [ກ]ຈ້ອງມອງ
ເບິ່ງເຈົ້າ, ແລະ ຈະພິຈາລະນາເຈົ້າ, ແລະ
ຈະເວົ້າວ່າ: ນີ້ບໍຜູ້ທີ່ເຮັດໃຫ້ແຜ່ນດິນ
ໂລກສັ່ນສະເທືອນ, ຜູ້ທີ່ສັ່ນອານາຈັກທັງ
ຫລາຍ?
17 ແລະ ເຮັດໃຫ້ໂລກເປັນເໝືອນດັ່ງ
ຖິ່ນແຫ້ງແລ້ງກັນດານ, ແລະ ທຳລາຍຫົວ
ເມືອງຕ່າງໆ, ແລະ ບໍ່ຍອມໃຫ້ນັກໂທດກັບ
ໄປບ້ານຂອງເຂົາ?
18 ກະສັດທັງໝົດຂອງປະຊາຊາດ, ແທ້
ຈິງແລ້ວ, ເຂົາທັງໝົດນອນຢູ່ຢ່າງມີກຽດ,
ຕ່າງກໍຢູ່ໃນ [ກ]ເຮືອນຂອງຕົນ.
19 ແຕ່ເຈົ້າຖືກໂຍນອອກຈາກຫລຸມສົບ
ຂອງເຈົ້າຄືກັນກັບ [ກ]ກິ່ງກ້ານທີ່ໜ້າກຽດຊັງ,
ດັ່ງຊາກສົບທີ່ຖືກຢຽບຢ່ຳຢູ່ໃຕ້ຕີນ ແລະ
ສ່ວນສຸດທ້າຍຂອງຜູ້ທີ່ຖືກຂ້າທີ່ຖືກແທງ
ດ້ວຍດາບ, ຊຶ່ງລົງໄປຍັງ [ຂ]ຫີນຂອງຫລຸມ
ສົບ.
20 ເຈົ້າຈະບໍ່ໄດ້ຮັບການຝັງສົບຮ່ວມກັບ
ຜູ້ຄົນເຫລົ່ານັ້ນ ເພາະວ່າເຈົ້າໄດ້ທຳລາຍ
ແຜ່ນດິນຂອງເຈົ້າ ແລະ ເຂັ່ນຂ້າຜູ້ຄົນຂອງ
ເຈົ້າ; ຂໍຢ່າໃຫ້ມີໃຜເອີ່ຍເຖິງຊື່ຂອງ [ກ]ລູກ
ຫລານຂອງຜູ້ [ຂ]ກະທຳຄວາມຊົ່ວອີກເລີຍ.
21 ຈົ່ງຕຽມການສັງຫານລູກຫລານຂອງ
ເຂົາເຖີດ ເພາະ [ກ]ຄວາມຊົ່ວຮ້າຍຂອງບັນ
ພະບຸລຸດຂອງພວກເຂົາ, ຢ້ານວ່າເຂົາຈະ
ລຸກຂຶ້ນເປັນເຈົ້າຂອງແຜ່ນດິນ ແລະ ເຮັດ
ໃຫ້ແຜ່ນດິນໂລກເຕັມໄປດ້ວຍຫົວເມືອງ
ຕ່າງໆ.
22 ຈອມໂຍທາໄດ້ກ່າວວ່າ: ເຮົາຈະລຸກ
ຂຶ້ນຕໍ່ສູ້ເຂົາ, ແລະ ຈະຕັດ [ກ]ຊື່ ແລະ ຜູ້ທີ່
ເຫລືອຢູ່ອອກຈາກບາບີໂລນ, ຈະຕັດລູກ
ຫລານ [ຂ]ພົງພັນອອກເສຍ, ພຣະເຈົ້າໄດ້
ກ່າວ.
23 ເຮົາຈະເຮັດໃຫ້ມັນເປັນ [ກ]ກຳມະສິດ
ຂອງນົກຍາງ, ແລະ ເປັນໜອງນ້ຳ; ແລະ
ເຮົາຈະກວາດມັນດ້ວຍ [ຂ]ຟອຍ ແຫ່ງຄວາມ
ພິນາດ ຈອມໂຍທາໄດ້ກ່າວໄວ້ດັ່ງນີ້ແຫລະ.
24 ຈອມໂຍທາໄດ້ປະຕິຍານວ່າ: ເຮົາ
ກະແຜນໄວ້ແນວໃດ, ແລະ ດັ່ງທີ່ເຮົາມີ
ຈຸດປະສົງແນວໃດ, ມັນກໍຈະເປັນໄປແນວ
ນັ້ນ—

12 ຂ ເຮັບເຣີ ດວງຮຸ່ງອາລຸນ, ໂອລົດແຫ່ງອາລຸນ. ຜູ້ປົກຄອງໂລກທີ່ຊົ່ວຮ້າຍ (ບາບີໂລນ) ແມ່ນກ່າວເຖິງລູຊິເຟີ, ຜູ້ປົກຄອງຂອງຄວາມຊົ່ວຮ້າຍທັງໝົດ. ຄມພ ມານ; ລູຊິເຟີ.
13 ກ ມຊ 4:1–4.
ຂ ອສ ທີ່ປະທັບຂອງບັນດາພຣະເຈົ້າ ຕາມຄວາມເຊື່ອຂອງຊາວບາບີໂລນ. ພສສ 48:2.
15 ກ 1 ນຟ 14:3.
16 ກ ເຮັບເຣີ ສົ້ງຕາເບິ່ງເຈົ້າ ແລະ ໄຕ່ຕອງກ່ຽວກັບເຈົ້າ.
18 ກ ອສ ອຸບມຸງຂອງຄອບຄົວກະສັດ.
19 ກ ອສ ກິ່ງກ້ານທີ່ຖືກປະຕິເສດ, ຖືກຕັດອອກ ແລະ ຖືກໂຍນຖິ້ມ.
ຂ ອສ ພື້ນດິນ.
20 ກ ພສສ 21:10–11; 37:28.
ຂ ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
21 ກ ອພຍ 20:5.
22 ກ ສພສ 10:7.
ຂ ໂຢບ 18:19.
23 ກ ອຊຢ 34:11–15.
ຂ ພ ຍູກວາດ.

25 ຄືເຮົາຈະນຳຊາວ [ກ]ອັດຊີເຣຍມາໃນ
ແຜ່ນດິນຂອງເຮົາ, ແລະ ຈະຢຽບເຂົາໄວ້
ໃຕ້ຕີນເທິງ [ຂ]ພູຂອງເຮົາ; ເມື່ອນັ້ນ [ຄ]ແອກ
ຂອງເຂົາຈະຫລຸດອອກຈາກພວກເຂົາ,
ແລະ ພາລະຂອງເຂົາຈະຫລຸດອອກຈາກ
ບ່າພວກເຂົາ.
26 [ກ]ນີ້ຄືຈຸດປະສົງທີ່ຕັ້ງໄວ້ເທິງແຜ່ນ
ດິນໂລກທັງໝົດ; ແລະ ນີ້ຄືພຣະຫັດທີ່ຍື່ນ
ອອກໄປເຖິງປະຊາຊາດທັງໝົດ.
27 ເພາະຈອມໂຍທາໄດ້ຕັ້ງໄວ້, ແລະ ຜູ້
ໃດຈະລົບລ້າງໄດ້? ແລະ ພຣະຫັດຂອງ
ພຣະອົງຈະຍື່ນອອກໄປ ແລະ ຜູ້ໃດຈະດຶງ
ມັນຄືນໄດ້?
28 ໃນ [ກ]ປີທີ່ກະສັດ [ຂ]ອາຮາດສິ້ນຊີວິດ
ພາລະອັນນີ້ໄດ້ເກີດຂຶ້ນ.
29 ປະເທດຟີລິດສະຕິນເອີຍ, ເຈົ້າທັງ
ໝົດຢ່າປິຕິຍິນດີເລີຍ; ເພາະວ່າໄມ້ແສ້ຂອງ
ເຂົາທີ່ຂ້ຽນຕີເຈົ້ານັ້ນໄດ້ຫັກໄປແລ້ວ; ເພາະ
ງູເຫົ່າຈະອອກມາຈາກຮາກເຫງົ້າຂອງມັນ,
ແລະ ລູກຂອງມັນຈະເປັນງູທີ່ພົ່ນພິດໄຟ.
30 ແລະ ລູກກົກຂອງຄົນທຸກຍາກຈະມີ
ກິນ, ແລະ ຄົນທີ່ຂັດສົນຈະນອນໃນຄວາມ
ປອດໄພ; ແລະ ເຮົາຈະຂ້າຮາກເຫງົ້າຂອງ
ເຈົ້າດ້ວຍຄວາມອຶດຢາກ ແລະ ມັນຈະຂ້າຜູ້
ທີ່ເຫລືອຢູ່ຂອງເຈົ້າ.
31 ໂອ້ ປະຕູ; ຈົ່ງຄວນຄາງເຖີດ; ໂອ້
ເມືອງຈົ່ງຮ້ອງໄຫ້ເຖີດ; ຊາວຟີລິດສະຕິນ
ທັງໝົດໄດ້ລະລາຍໄປແລ້ວ; ເພາະຈະມີ
ຄວັນມາຈາກທາງເໜືອ ແລະ ຈະບໍ່ມີໃຜຢູ່
ຕາມລຳພັງຕາມກຳນົດເວລາຂອງເຂົາ.
32 ທູດຂອງປະຊາຊາດຈະຕອບວ່າແນວ
ໃດ? ກໍວ່າພຣະຜູ້ເປັນເຈົ້າໄດ້ສະຖາປະນາ
[ກ]ຊີໂອນແລ້ວ, ແລະ [ຂ]ຄົນຍາກຈົນໃນຊົນ
ຊາດຂອງພຣະອົງໄດ້ [ຄ]ພົບທີ່ຫລົບໄພໃນທີ່
ນັ້ນ.

## ບົດທີ 25

*ນີໄຟພາກພູມໃຈໃນຄວາມແຈ່ມແຈ້ງ—ຄຳທຳນາຍຂອງເອຊາຢາຈະເປັນທີ່ເຂົ້າໃຈໃນຍຸກສຸດທ້າຍ—ຊາວຢິວຈະກັບຄືນມາຈາກບາບີໂລນ, ຄຶງພຣະເມຊີອາໄວ້ເທິງໄມ້ກາງແຂນ, ແລະ ກະຈັດກະຈາຍໄປ ແລະ ຖືກຂ້ຽນຕີ—ພວກເຂົາຈະຖືກນຳກັບຄືນມາໃໝ່ເມື່ອພວກເຂົາເຊື່ອໃນພຣະເມຊີອາ—ພຣະອົງຈະສະເດັດມາເປັນຄັ້ງທຳອິດໃນຫົກຮ້ອຍປີຫລັງຈາກລີໄຮໄດ້ອອກຈາກເຢຣູຊາເລັມ—ຊາວນີໄຟຮັກສາກົດຂອງໂມເຊ ແລະ ເຊື່ອໃນພຣະຄຣິດ ຊຶ່ງເປັນພຣະຜູ້ບໍລິສຸດຂອງອິດສະຣາເອນ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້ານີໄຟຂໍເວົ້າໄວ້
ບາງຢ່າງກ່ຽວກັບຄຳເວົ້າທີ່ຂ້າພະເຈົ້າໄດ້
ບັນທຶກໄວ້, ຊຶ່ງເວົ້າອອກຈາກປາກຂອງ
ເອຊາຢາ. ເພາະຈົ່ງເບິ່ງ, ເອຊາຢາໄດ້ເວົ້າ
ຫລາຍເລື່ອງຊຶ່ງ [ກ]ຍາກທີ່ຈະເຂົ້າໃຈສຳລັບ
ຜູ້ຄົນຢ່າງຫລວງຫລາຍຂອງຂ້າພະເຈົ້າ;
ເພາະພວກເຂົາບໍ່ຮູ້ເຖິງວິທີການທຳນາຍ

25 *ກ* ເນື້ອຄວາມປ່ຽນມາກ່າວເຖິງການມາໂຈມຕີຂອງອັດຊີເຣຍ ແລະ ການຕົກຂອງຢູດາ, 701 ປີ ກ່ອນ ຄ.ສ. (ຂໍ້ທີ 24–27). 2 ກສ 19:32–37; ອຊຢ 37:33–38.
*ຂ* ອສ ພູຂອງຢູດາ ແລະ ອິດສະຣາເອນ.
*ຄ* ອຊຢ 10:27.
26 *ກ* ອສ ໃນທີ່ສຸດ ປະຊາຊາດທັງມວນໃນໂລກ ຈະຖືກໂຄ່ນລົ້ມດັ່ງນັ້ນ.
28 *ກ* ອສ ປະມານ 720 ປີ ກ່ອນ ຄ.ສ., ພາລະໜັກໜ່ວງ ຫລື ຂ່າວສານແຫ່ງຄວາມພິນາດ ໄດ້ຖືກທຳນາຍໄວ້ກ່ຽວກັບຊາວຟີລິດສະຕິນ, ໃນຂະນະທີ່ຢູດາຢູ່ໃນຄວາມໝັ້ນຄົງ.
*ຂ* 2 ກສ 16:20.
32 *ກ* ຄມພ ຊີໂອນ.
*ຂ* ຊຟຢ 3:12.
*ຄ* ພ ຊອກຫາບ່ອນຫລົບໄພໃນທີ່ນັ້ນ.
**25** 1 *ກ* 2 ນຟ 25:5–6.

ໃນບັນດາຊາວຢິວ.
2 ເພາະຂ້າພະເຈົ້ານີໄຟບໍ່ໄດ້ສິດສອນ
ພວກເຂົາຫລາຍເລື່ອງກ່ຽວກັບວິທີຂອງ
ຊາວຢິວ ເພາະ [ກ]ວຽກງານຂອງພວກເຂົາ
ເປັນວຽກງານແຫ່ງຄວາມມືດ, ແລະ ການ
ປະຕິບັດຂອງພວກເຂົາເປັນການປະຕິບັດ
ອັນໜ້າກຽດຊັງ.
3 ດັ່ງນັ້ນ, ຂ້າພະເຈົ້າຈຶ່ງບັນທຶກເຖິງຜູ້ຄົນ
ຂອງຂ້າພະເຈົ້າ ເຖິງຄົນທັງປວງໃນເວລາ
ຕໍ່ໄປ, ເພື່ອຈະໄດ້ຮັບເລື່ອງເຫລົ່ານີ້ ຊຶ່ງຂ້າ
ພະເຈົ້າໄດ້ບັນທຶກໄວ້, ເພື່ອພວກເຂົາຈະ
ໄດ້ຮູ້ຈັກການພິພາກສາຂອງພຣະເຈົ້າທີ່
ຈະມາເຖິງປະຊາຊາດທັງປວງຕາມພຣະ
ຄຳທີ່ພຣະອົງໄດ້ກ່າວໄວ້.
4 ດັ່ງນັ້ນ, ຈົ່ງເຊື່ອຟັງເຖີດ, ໂອ້ ຜູ້ຄົນ
ຂອງຂ້າພະເຈົ້າ ຊຶ່ງເປັນຂອງເຊື້ອສາຍ
ອິດສະຣາເອນ, ແລະ ຈົ່ງຕັ້ງໃຈຟັງຄຳຂອງ
ຂ້າພະເຈົ້າ; ເພາະເນື່ອງຈາກຄຳເວົ້າຂອງ
ເອຊາຢາບໍ່ແຈ່ມແຈ້ງແກ່ທ່ານ, ເຖິງຢ່າງໃດ
ກໍຕາມ, ມັນຍັງແຈ່ມແຈ້ງແກ່ຄົນທັງປວງ
ທີ່ເຕັມໄປດ້ວຍ [ກ]ວິນຍານແຫ່ງ [ຂ]ການທຳ
ນາຍ. ແຕ່ຂ້າພະເຈົ້າໃຫ້ຄຳທຳນາຍແກ່
ທ່ານເລື່ອງໜຶ່ງຕາມວິນຍານທີ່ມີຢູ່ກັບຂ້າ
ພະເຈົ້າ; ດັ່ງນັ້ນ ຂ້າພະເຈົ້າຈະທຳນາຍ
ໃຫ້ [ຄ]ແຈ່ມແຈ້ງຕາມວິນຍານທີ່ມີຢູ່ກັບຂ້າ
ພະເຈົ້າ ນັບຕັ້ງແຕ່ເວລາທີ່ຂ້າພະເຈົ້າໄດ້
ອອກຈາກເຢຣູຊາເລັມມາກັບບິດາຂອງຂ້າ
ພະເຈົ້າ; ເພາະຈົ່ງເບິ່ງ, ຈິດວິນຍານຂອງ
ຂ້າພະເຈົ້າເບີກບານໃນຄວາມແຈ່ມແຈ້ງທີ່
ມີແກ່ຜູ້ຄົນຂອງຂ້າພະເຈົ້າ, ເພື່ອພວກເຂົາ
ຈະໄດ້ຮຽນຮູ້.
5 ແທ້ຈິງແລ້ວ, ແລະ ຈິດວິນຍານຂອງ
ຂ້າພະເຈົ້າເບີກບານໃນຄຳເວົ້າຂອງ
[ກ]ເອຊາຢາ, ເພາະຂ້າພະເຈົ້າອອກຈາກ
ເຢຣູຊາເລັມ ແລະ ຕາຂອງຂ້າພະເຈົ້າເຫັນ
ສິ່ງຕ່າງໆຂອງ [ຂ]ຊາວຢິວ, ແລະ ຂ້າພະເຈົ້າ
ຮູ້ວ່າ ຊາວຢິວເຂົ້າໃຈເລື່ອງຂອງສາດສະ
ດາ, ແລະ ບໍ່ມີຄົນອື່ນໃດທີ່ເຂົ້າໃຈເລື່ອງນີ້
ຊຶ່ງໄດ້ເວົ້າໄວ້ກັບຊາວຢິວເໝືອນກັບພວກ
ເຂົາ, ນອກຈາກພວກເຂົາຈະໄດ້ຮັບການ
ສິດສອນມາຕາມວິທີອັນເປັນເລື່ອງຂອງ
ຊາວຢິວ.
6 ແຕ່ຈົ່ງເບິ່ງ, ຂ້າພະເຈົ້ານີໄຟບໍ່ໄດ້ສິດ
ສອນລູກຫລານຂອງຂ້າພະເຈົ້າຕາມວິທີ
ຂອງຊາວຢິວ; ແຕ່ຈົ່ງເບິ່ງ ຂ້າພະເຈົ້າເອງຢູ່
ທີ່ເຢຣູຊາເລັມ, ດັ່ງນັ້ນຂ້າພະເຈົ້າຈຶ່ງຮູ້ຈັກ
ກ່ຽວກັບພາກພື້ນຕ່າງໆໂດຍອ້ອມຮອບ;
ແລະ ຂ້າພະເຈົ້າໄດ້ເວົ້າກັບລູກຫລານຂອງ
ຂ້າພະເຈົ້າກ່ຽວກັບການພິພາກສາຂອງ
ພຣະເຈົ້າ ຊຶ່ງໄດ້ [ກ]ເກີດຂຶ້ນແລ້ວກັບບັນດາ
ຊາວຢິວມາເຖິງລູກຫລານຂອງຂ້າພະເຈົ້າ
ຕາມເລື່ອງທັງໝົດທີ່ເອຊາຢາເວົ້າໄວ້ ແລະ
ຂ້າພະເຈົ້າບໍ່ໄດ້ບັນທຶກໄວ້.
7 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າເລີ່ມດ້ວຍການ
ທຳນາຍຂອງຂ້າພະເຈົ້າເອງຕາມ [ກ]ຄວາມ
ແຈ່ມແຈ້ງຂອງຂ້າພະເຈົ້າ; ຊຶ່ງໃນນັ້ນຂ້າ
ພະເຈົ້າຮູ້ວ່າ ບໍ່ມີໃຜກະທຳຜິດໄດ້; ເຖິງ
ຢ່າງໃດກໍຕາມ, ໃນວັນທີ່ຄຳທຳນາຍຂອງ
ເອຊາຢາຈະເປັນຄວາມຈິງນັ້ນ ມະນຸດຈະຮູ້
ຈັກຢ່າງແນ່ນອນເຖິງເວລາເມື່ອມັນຈະບັງ
ເກີດຂຶ້ນ.
8 ດັ່ງນັ້ນ, ມັນຈຶ່ງ [ກ]ມີຄຸນຄ່າຕໍ່ລູກຫລານ

2 *ກ* 2 ກສ 17:13–20.
4 *ກ* ຄມພ ພຣະວິນຍານບໍລິສຸດ.
*ຂ* ຄມພ ທຳນາຍ, ການ ທຳນາຍ, ຄຳທຳນາຍ.
*ຄ* 2 ນຟ 31:3; 33:5–6; ຢຄ 4:13.
5 *ກ* 1 ນຟ 19:23; 3 ນຟ 23:1.
*ຂ* ຄມພ ຊາວຢິວ.
6 *ກ* 2 ນຟ 6:8; ຣລມ 8:20–21.
7 *ກ* 2 ນຟ 32:7; ແອວ 13:23.
8 *ກ* ຄມພ ພຣະຄຳພີ—ຄຸນ ຄ່າຂອງພຣະຄຳພີ.

ມະນຸດ ແລະ ຄົນທີ່ຄິດວ່າມັນບໍ່ມີຄຸນຄ່າ,
ຂ້າພະເຈົ້າຈະເວົ້າກັບ ພວກ ເຂົາ ໂດຍສະ
ເພາະ ແລະ ເຈາະຈົງຖ້ອຍຄຳເຫລົ່ານີ້ເຖິງ
ຜູ້ຄົນຂອງຂ້າພະເຈົ້າ [ຂ]ເອງ; ເພາະຂ້າພະ
ເຈົ້າຮູ້ວ່າມັນຈະມີຄຸນຄ່າໃຫຍ່ຫລວງກັບ
ພວກເຂົາໃນ [ຄ]ຍຸກສຸດທ້າຍ; ເພາະໃນມື້
ນັ້ນພວກເຂົາຈະເຂົ້າໃຈມັນ; ດັ່ງນັ້ນ ຂ້າພະ
ເຈົ້າຈຶ່ງບັນທຶກມັນໄວ້ເພື່ອຜົນປະໂຫຍດ
ຂອງພວກເຂົາ.
9 ແລະ ຄືກັນກັບລຸ້ນໜຶ່ງຖືກ [ກ]ທຳລາຍ
ໄປແລ້ວໃນບັນດາຊາວຢິວ ເພາະຄວາມ
ຊົ່ວຮ້າຍ, ດັ່ງນັ້ນ ພວກເຂົາຈຶ່ງຖືກທຳລາຍ
ຈາກລຸ້ນສູ່ລຸ້ນ ຕາມຄວາມຊົ່ວຮ້າຍຂອງ
ພວກເຂົາ; ແລະ ບໍ່ມີໃຜພາຍໃນພວກເຂົາ
ເຄີຍຖືກທຳລາຍນອກຈາກສາດສະດາ
ຂອງພຣະຜູ້ເປັນເຈົ້າຈະ [ຂ]ບອກພວກເຂົາ
ໄວ້ລ່ວງໜ້າ.
10 ດັ່ງນັ້ນ ມັນຖືກບອກແກ່ພວກເຂົາ
ແລ້ວກ່ຽວກັບຄວາມພິນາດ ຊຶ່ງຈະເກີດ
ກັບພວກເຂົາໃນທັນທີຫລັງຈາກບິດາຂອງ
ຂ້າພະເຈົ້າອອກຈາກເຢຣູຊາເລັມມາ; ເຖິງ
ຢ່າງໃດກໍຕາມ, ພວກເຂົາຍັງເຮັດໃຈແຂງ
ກະດ້າງ; ແລະ ຕາມການທຳນາຍຂອງຂ້າ
ພະເຈົ້າ, ພວກເຂົາຈຶ່ງຖືກ [ກ]ທຳລາຍ, ເວັ້ນ
ເສຍແຕ່ພວກທີ່ຖືກ [ຂ]ພາໄປເປັນຊະເລີຍ
ໃນບາບີໂລນ.
11 ແລະ ບັດນີ້ຂ້າພະເຈົ້າເວົ້າເລື່ອງນີ້
ເພາະວິນຍານຊຶ່ງຢູ່ໃນຂ້າພະເຈົ້າ. ແລະ
ທັງທີ່ພວກເຂົາຖືກພາໄປແລ້ວ ພວກເຂົາກໍ
ຈະກັບມາອີກ ແລະ ເປັນເຈົ້າຂອງແຜ່ນດິນ
ເຢຣູຊາເລັມ; ດັ່ງນັ້ນ, ພວກເຂົາຈຶ່ງຈະຖືກ
[ກ]ນຳກັບຄືນໄປຫາແຜ່ນດິນ ຊຶ່ງເປັນມູນມໍ
ລະດົກຂອງພວກເຂົາອີກ.
12 ແຕ່ຈົ່ງເບິ່ງ, ພວກເຂົາຈະມີສົງຄາມ
ແລະ ຂ່າວລືເລື່ອງສົງຄາມ; ແລະ ເມື່ອວັນ
ນັ້ນຈະມາເຖິງທີ່ [ກ]ພຣະອົງດຽວທີ່ຖືກຳເນີດ
ຈາກພຣະບິດາ, ແທ້ຈິງແລ້ວ, ແມ່ນພຣະ
ບິດາແຫ່ງສະຫວັນ ແລະ ແຫ່ງແຜ່ນດິນ
ໂລກຈະສະແດງພຣະອົງເອງໃຫ້ປະຈັກແກ່
ພວກເຂົາໃນເນື້ອໜັງ, ຈົ່ງເບິ່ງ, ພວກເຂົາ
ຈະປະຕິເສດພຣະອົງເພາະຄວາມຊົ່ວຮ້າຍ
ຂອງພວກເຂົາ ແລະ ຄວາມແຂງກະດ້າງ
ຂອງໃຈຂອງພວກເຂົາ ແລະ ຄວາມແຂງຄໍ
ຂອງພວກເຂົາ.
13 ຈົ່ງ ເບິ່ງ, ພວກ ເຂົາ ຈະ [ກ]ຄຶງ ພຣະ
ອົງໄວ້ເທິງໄມ້ກາງແຂນ; ແລະ ຫລັງຈາກ
ພຣະອົງຖືກວາງໄວ້ໃນ [ຂ]ອຸບມຸງ [ຄ]ສາມມື້,
ພຣະອົງຈະ [ງ]ລຸກຂຶ້ນຈາກຄວາມຕາຍໂດຍ
ອຳນາດແຫ່ງການປິ່ນປົວຂອງພຣະອົງ
ແລະ ຄົນທັງປວງທີ່ເຊື່ອໃນພຣະນາມຂອງ
ພຣະອົງຈະລອດໃນອານາຈັກຂອງພຣະ
ເຈົ້າ. ດັ່ງນັ້ນ, ຈິດວິນຍານຂອງຂ້າພະເຈົ້າ
ຈຶ່ງເບີກບານທີ່ຈະທຳນາຍກ່ຽວກັບພຣະອົງ
ເພາະວ່າຂ້າພະເຈົ້າ [ຈ]ເຫັນວັນຂອງພຣະ
ອົງແລ້ວ, ແລະ ໃຈຂອງຂ້າພະເຈົ້າເທີດທູນ
ພຣະນາມອັນສັກສິດຂອງພຣະອົງ.
14 ແລະ ຈົ່ງເບິ່ງ ເຫດການຈະບັງເກີດ
ຂຶ້ນຄື ຫລັງຈາກ [ກ]ພຣະເມຊີອາລຸກຂຶ້ນຈາກ

8 ຂ ອນ 1:13–16; ມມ 5:12–15; ຄພ 3:16–20.
ຄ ຄນພ ຍຸກສຸດທ້າຍ.
9 ກ ຢມຢ 39:4–10; ມທ 23:37–38.
ຂ ອນ 3:7; 1 ນຟ 1:13.
10 ກ 1 ນຟ 7:13; 2 ນຟ 6:8; ອມນ 1:15; ຮລມ 8:20–21.
ຂ 2 ກສ 24:14; ຢມຢ 52:3–16.
11 ກ ອຊຣ 1:1–4; ຢມຢ 24:5–7.
12 ກ ຄນພ ອົງດຽວທີ່ຖືກຳເນີດ.
13 ກ ລກ 23:33.
ຂ ຢຮ 19:41–42; 1 ນຟ 19:10.
ຄ ລກ 24:6–7; ມຊຢ 3:10.
ງ ຄນພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຈ 1 ນຟ 11:13–34.
14 ກ ຄນພ ພຣະເມຊີອາ.

ຄວາມ ຕາຍ ແລ້ວ, ແລະ ໄດ້ ສະແດງ ພຣະ
ອົງ ເອງ ໃຫ້ປະຈັກ ແກ່ຜູ້ຄົນ ຂອງພຣະອົງ,
ແລະ ແກ່ຫລາຍຕໍ່ຫລາຍຄົນທີ່ຈະເຊື່ອໃນ
ພຣະນາມຂອງພຣະອົງແລ້ວ, ຈົ່ງເບິ່ງ, ເຢຣູ
ຊາເລັມຈະຖືກ ຂທຳລາຍອີກ; ເພາະວິບັດ
ແກ່ຜູ້ທີ່ຕໍ່ສູ້ກັບພຣະເຈົ້າ ແລະ ຜູ້ຄົນຂອງ
ສາດສະໜາຈັກຂອງພຣະອົງ.
15 ດັ່ງ ນັ້ນ, ກຊາວ ຢິວ ຈະ ຂກະ ຈັດ ກະ
ຈາຍໄປໃນບັນດາປະຊາຊາດທັງປວງ; ແທ້
ຈິງແລ້ວ, ຄບາບີໂລນຈະຖືກທຳລາຍຄືກັນ;
ດັ່ງນັ້ນ, ຊາວ ຢິວ ຈະ ກະ ຈັດ ກະ ຈາຍ ໄປ
ຍ້ອນປະຊາຊາດອື່ນໆ.
16 ແລະ ຫລັງຈາກພວກເຂົາຖືກກະຈັດ
ກະຈາຍໄປແລ້ວ ແລະ ອົງພຣະຜູ້ເປັນເຈົ້າ
ໄດ້ຂ້ຽນຕີພວກເຂົາໂດຍປະຊາຊາດອື່ນໆ
ເປັນ ເວລາຫລາຍລຸ້ນຄົນ, ແທ້ຈິງແລ້ວ,
ຈາກລຸ້ນສູ່ລຸ້ນ ຈົນວ່າພວກເຂົາຈະຖືກຊັກ
ຊວນໃຫ້ ກເຊື່ອ ໃນພຣະຄຣິດ, ພຣະບຸດ
ຂອງພຣະເຈົ້າ, ແລະ ການຊົດໃຊ້ທີ່ບໍ່ມີ
ຂອບເຂດເພື່ອມະນຸດຊາດທັງປວງ—ແລະ
ມື້ນັ້ນຈະມາເຖິງ ເມື່ອພວກເຂົາຈະເຊື່ອ
ໃນພຣະຄຣິດ, ແລະ ນະມັດສະການພຣະ
ບິດາໃນພຣະນາມຂອງພຣະອົງດ້ວຍໃຈທີ່
ບໍລິສຸດ ແລະ ມືທີ່ສະອາດ, ແລະ ບໍ່ຊອກ
ຫາພຣະເມຊີອາອົງອື່ນອີກຕໍ່ໄປ, ເມື່ອໃນ
ເວລານັ້ນ ມື້ຈະມາເຖິງທີ່ສົມຄວນເມື່ອ
ພວກເຂົາຈະຕ້ອງເຊື່ອສິ່ງເຫລົ່ານີ້.
17 ແລະ ພຣະຜູ້ເປັນເຈົ້າຈະຍົກພຣະ
ຫັດອີກເປັນຄັ້ງທີສອງເພື່ອ ກນຳເອົາຜູ້ຄົນ
ຂອງພຣະອົງກັບຄືນມາຈາກການຫລົງ
ທາງ ແລະ ສະພາບຂອງການຕົກ. ດັ່ງນັ້ນ,
ພຣະອົງຈະ ຂເລີ່ມທຳງານແປກປະຫລາດ
ແລະ ອັດສະຈັນ ໃນບັນດາລູກຫລານ
ມະນຸດ.
18 ດັ່ງນັ້ນ, ພຣະອົງຈະນຳເອົາ ກພຣະ
ຄຳຂອງພຣະອົງອອກມາໃຫ້ພວກເຂົາ, ຊຶ່ງ
ພຣະຄຳນັ້ນຈະ ຂພິພາກສາພວກເຂົາໃນ
ວັນສຸດທ້າຍ ເພາະຈະປະທານພຣະຄຳ
ໃຫ້ພວກເຂົາດ້ວຍຈຸດປະສົງທີ່ຈະໃຫ້ພວກ
ເຂົາ ຄຄຳນຶງເຖິງພຣະເມຊີອາອົງແທ້ຈິງ, ຜູ້
ທີ່ຖືກພວກເຂົາປະຕິເສດ; ແລະ ເພື່ອໃຫ້
ແນ່ໃຈຕໍ່ພວກເຂົາວ່າ ພວກເຂົາບໍ່ຈຳເປັນ
ຕ້ອງຊອກຫາພຣະເມຊີອາທີ່ຈະສະເດັດມາ
ຕໍ່ໄປອີກ, ເພາະຈະບໍ່ມີອົງໃດສະເດັດມາ
ນອກຈາກຈະເປັນ ງພຣະເມຊີອາປອມ; ຊຶ່ງ
ຈະຫລອກລວງຜູ້ຄົນເພາະວ່າມີພຣະເມຊີ
ອາອົງດຽວທີ່ສາດສະດາໄດ້ເວົ້າເຖິງ, ແລະ
ພຣະເມຊີອາອົງນັ້ນຄື ພຣະອົງຈະຖືກຊາວ
ຢິວປະຕິເສດ.
19 ເພາະຕາມຄຳຂອງສາດສະດາເວົ້າ
ແລ້ວ ກພຣະເມຊີອາຈະສະເດັດມາພາຍ
ໃນ ຂຫົກຮ້ອຍປີນັບແຕ່ເວລາທີ່ບິດາຂອງ
ຂ້າພະເຈົ້າໄດ້ໜີອອກຈາກເຢຣູຊາເລັມ
ມາ; ແລະ ຕາມຄຳເວົ້າຂອງສາດສະດາ
ແລະ ຄຳເວົ້າຂອງ ຄທູດຂອງພຣະເຈົ້າຄື
ກັນ, ພຣະນາມຂອງພຣະອົງຈະເປັນພຣະ

14 *ຂ* ລກ 21:24;
ຈສ—ມ 1:1–18.
15 *ກ* ຄມພ ຊາວຢິວ.
*ຂ* ນມຢ 1:8–9;
2 ນຟ 10:6.
*ຄ* ຄມພ ບາເບນ, ບາບີໂລນ.
16 *ກ* 2 ນຟ 10:6–9; 30:7;
ມມ 5:14.
17 *ກ* 2 ນຟ 21:11–12; 29:1.
ຄມພ ການຟື້ນຟູ
ພຣະກິດຕິຄຸນ.
*ຂ* ອຊຢ 29:14;
2 ນຟ 27:26;
3 ນຟ 28:31–33.
18 *ກ* 2 ນຟ 29:11–12;
33:11, 14–15.
*ຂ* ຄມພ ພິພາກສາ, ການ
ພິພາກສາຄັ້ງສຸດທ້າຍ.
*ຄ* 2 ນຟ 26:12–13.
*ງ* ຄມພ ຜູ້ຕໍ່ຕ້ານພຣະຄຣິດ.
19 *ກ* ຄມພ ພຣະເຢຊູຄຣິດ—
ການທຳນາຍກ່ຽວກັບ
ການກຳເນີດ ແລະ
ການສິ້ນພຣະຊົນຂອງ
ພຣະເຢຊູຄຣິດ.
*ຂ* 1 ນຟ 10:4;
3 ນຟ 1:1, 13.
*ຄ* 2 ນຟ 10:3.

ເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ.
20 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າໄດ້ເວົ້າມາແລ້ວຢ່າງແຈ່ມແຈ້ງ
ເພື່ອພວກທ່ານຈະເຂົ້າໃຈຜິດບໍ່ໄດ້, ແລະ
ອົງພຣະຜູ້ເປັນເຈົ້າຊົງພຣະຊົນສັນໃດ ຜູ້
ຊຶ່ງໄດ້ [ກ]ນຳພາອິດສະຣາເອນອອກຈາກ
ແຜ່ນດິນເອຢິບ ແລະ ປະທານອຳນາດໃຫ້
ໂມເຊ ເພື່ອເພິ່ນຈະ [ຂ]ປິ່ນປົວຜູ້ຄົນເວລາ
ພວກເຂົາຖືກງູພິດຕອດ, ຖ້າພວກເຂົາ
ຫລຽວເບິ່ງ [ຄ]ງູທີ່ຍົກຂຶ້ນຢູ່ຕໍ່ໜ້າເຂົາ ແລະ
ປະທານອຳນາດໃຫ້ເພິ່ນອີກ ເພື່ອເພິ່ນ
ຈະໄດ້ [ງ]ຕີຫີນ ແລະ ນ້ຳໄດ້ໄຫລອອກມາ;
ແທ້ຈິງແລ້ວ, ຈົ່ງເບິ່ງ ຂ້າພະເຈົ້າຂໍເວົ້າກັບ
ພວກທ່ານວ່າ ຕາບໃດສິ່ງເຫລົ່ານີ້ເປັນ
ຄວາມຈິງ ແລະ ຕາບໃດອົງພຣະຜູ້ເປັນ
ເຈົ້າຊົງພຣະຊົນຢູ່ ຈະບໍ່ມີ [ຈ]ນາມອື່ນໃດ
ປະທານໃຫ້ພາຍໃຕ້ສະຫວັນສັນນັ້ນ ນອກ
ຈາກຈະເປັນພຣະເຢຊູຄຣິດອົງນີ້, ອົງທີ່ຂ້າ
ພະເຈົ້າໄດ້ເວົ້າມາແລ້ວ, ຊຶ່ງໂດຍພຣະນາມ
ນີ້ມະນຸດຈະລອດໄດ້.
21 ດັ່ງນັ້ນ, ດ້ວຍເຫດນີ້ ອົງພຣະຜູ້ເປັນ
ເຈົ້າຈຶ່ງສັນຍາກັບຂ້າພະເຈົ້າວ່າ ສິ່ງເຫລົ່າ
ນີ້ທີ່ຂ້າພະເຈົ້າ [ກ]ບັນທຶກ ຈະຖືກເກັບມ້ຽນ
ແລະ ຮັກສາໄວ້, ແລະ ມອບຕໍ່ໆກັນໄປໃຫ້
ລູກຫລານຂອງຂ້າພະເຈົ້າຈາກລຸ້ນສູ່ລຸ້ນ,
ເພື່ອຄຳສັນຍາຈະໄດ້ສຳເລັດກັບໂຢເຊັບຄື
ລູກຫລານຂອງເພິ່ນຈະບໍ່ [ຂ]ຕາຍເລີຍຕາບ
ໃດທີ່ແຜ່ນດິນໂລກຍັງຕັ້ງຢູ່.
22 ດັ່ງນັ້ນ, ສິ່ງເຫລົ່ານີ້ຈະໄປຈາກລຸ້ນສູ່
ລຸ້ນ ຕາບໃດແຜ່ນດິນໂລກຍັງຕັ້ງຢູ່ ແລະ
ຈະໄປຕາມພຣະປະສົງ ແລະ ຄວາມພໍ
ພຣະໄທຂອງພຣະເຈົ້າ; ແລະ ປະຊາຊາດ
ຜູ້ຈະໄດ້ເປັນເຈົ້າຂອງ ຈະໄດ້ຖືກ [ກ]ພິພາກ
ສາຕາມຂໍ້ຄວາມທີ່ໄດ້ບັນທຶກໄວ້.
23 ເພາະພວກເຮົາເຮັດການຢ່າງພາກ
ພຽນທີ່ຈະບັນທຶກ ແລະ ຈະ [ກ]ຊັກຊວນລູກ
ຫລານຂອງພວກເຮົາ ແລະ ພີ່ນ້ອງຂອງ
ພວກເຮົາອີກໃຫ້ເຊື່ອໃນພຣະຄຣິດ ແລະ
ໃຫ້ທຳຕົນປອງດອງກັບພຣະເຈົ້າ ເພາະ
ພວກເຮົາຮູ້ວ່າ ຫລັງຈາກພວກເຮົາ [ຂ]ເຮັດ
ທຸກຢ່າງໄດ້ແລ້ວ ໂດຍ [ຄ]ພຣະຄຸນພວກເຮົາ
ຈຶ່ງລອດ.
24 ແລະ ທັງທີ່ພວກເຮົາເຊື່ອຖືໃນພຣະ
ຄຣິດ, ພວກເຮົາຍັງ [ກ]ຮັກສາກົດຂອງໂມເຊ
ແລະ ລະນຶກຫາພຣະຄຣິດດ້ວຍຄວາມຕັ້ງ
ໃຈຈົນກວ່າກົດຈະສຳເລັດ.
25 ເພາະວ່າ [ກ]ກົດປະທານໃຫ້ເພື່ອຈຸດ
ມຸ້ງໝາຍນີ້; ດັ່ງນັ້ນ ກົດຈຶ່ງ [ຂ]ຕາຍສຳລັບ
ພວກເຮົາ, ແລະ ພວກເຮົາຈະເຮັດໃຫ້ມີຊີ
ວິດໃນພຣະຄຣິດເພາະສັດທາຂອງພວກ
ເຮົາ; ພວກເຮົາກໍຍັງຮັກສາກົດໄວ້ ເພາະ
ພຣະບັນຍັດ.
26 ແລະ ພວກເຮົາ [ກ]ເວົ້າເຖິງພຣະຄຣິດ,
ພວກເຮົາປິຕິຍິນດີໃນພຣະຄຣິດ, ພວກ

20 *ກ* ອພຍ 3:7–10;
1 ນຟ 17:24, 31; 19:10.
*ຂ* ຢຣ 3:14; 1 ນຟ 17:41.
*ຄ* ຈບຊ 21:8–9;
ແອວ 33:19;
ຮລມ 8:14–15.
*ງ* ອພຍ 17:6;
ຈບຊ 20:11;
1 ນຟ 17:29; 20:21.
*ຈ* ຮສອ 13:4;
ກຈກ 4:10–12;
ມຊຢ 5:8;
ມຊ 6:52.
ຄມພ ພຣະຜູ້ຊ່ວຍໃຫ້ລອດ.
21 *ກ* 2 ນຟ 27:6–14.
*ຂ* ອມ 5:15; 2 ນຟ 3:16;
ແອວ 46:24–27.
22 *ກ* 2 ນຟ 29:11; 33:10–15;
3 ນຟ 27:23–27.
23 *ກ* ຄມພ ເດັກ, ເດັກນ້ອຍ.
*ຂ* ຢກບ 2:14–26.
ຄມພ ວຽກງານ.
*ຄ* ຣມ 3:23–24;
2 ນຟ 2:4–10;
ມຊຢ 13:32;
ແອວ 42:12–16;
ຄພ 138:4.
ຄມພ ພຣະຄຸນ.
24 *ກ* ຢຄ 4:4–5.
25 *ກ* ຄມພ ກົດຂອງໂມເຊ.
*ຂ* ຣມ 7:4–6.
26 *ກ* ຢຄ 4:12;
ຈຣ 1:11; ມຊຢ 3:13.

ເຮົາສັ່ງສອນເລື່ອງພຣະຄຣິດ, ພວກເຮົາ
[ຂ]ທຳນາຍເຖິງພຣະຄຣິດ, ແລະ ພວກເຮົາ
ບັນທຶກຕາມຄຳທຳນາຍຂອງພວກເຮົາ
ເພື່ອ [ຄ]ລູກຫລານຂອງພວກເຮົາ ຈະໄດ້ຮູ້
ວ່າ ພວກເຂົາຈະຫລຽວຫາແຫລ່ງໃດເພື່ອ
[ງ]ການປົດບາບຂອງພວກເຂົາ.
27 ດັ່ງນັ້ນ, ພວກເຮົາຈຶ່ງເວົ້າກ່ຽວກັບກົດ
ເພື່ອລູກຫລານຂອງພວກເຮົາຈະໄດ້ຮູ້ຈັກ
ຄວາມຕາຍຂອງກົດ ແລະ ພວກເຂົາໂດຍ
ທີ່ຮູ້ຈັກຄວາມຕາຍຂອງກົດແລ້ວ, ຈຶ່ງໄດ້
ມຸ້ງຫາຊີວິດນັ້ນຊຶ່ງມີຢູ່ໃນພຣະຄຣິດ ແລະ
ຮູ້ວ່າມີກົດເພື່ອຈຸດມຸ້ງໝາຍອັນໃດ ແລະ
ເພື່ອພວກເຂົາບໍ່ຄວນຈະເຮັດໃຈແຂງກະ
ດ້າງຕໍ່ພຣະອົງ ເມື່ອຄວນຈະຍົກເລີກກົດ
ຫລັງຈາກກົດສຳເລັດໃນພຣະຄຣິດແລ້ວ.
28 ແລະ ບັດນີ້ຈົ່ງເບິ່ງ, ຜູ້ຄົນຂອງຂ້າພະ
ເຈົ້າ, ພວກທ່ານເປັນຄົນ [ກ]ແຂງຄໍ; ດັ່ງນັ້ນ,
ຂ້າພະເຈົ້າຈຶ່ງໄດ້ເວົ້າກັບພວກທ່ານຢ່າງ
ແຈ່ມແຈ້ງເພື່ອພວກທ່ານຈະເຂົ້າໃຈຜິດບໍ່
ໄດ້. ແລະ ຂໍ້ຄວາມຊຶ່ງຂ້າພະເຈົ້າໄດ້ເວົ້າ
ໄວ້ຈະຢືນເປັນ [ຂ]ປະຈັກພະຍານກ່າວໂທດ
ພວກທ່ານ; ເພາະວ່າມັນພຽງພໍທີ່ຈະ [ຄ]ສິດ
ສອນທາງທີ່ຖືກຕ້ອງໃຫ້ຜູ້ໃດຜູ້ໜຶ່ງເພາະ
ທາງທີ່ຖືກຕ້ອງຄື ເຊື່ອໃນພຣະຄຣິດ ແລະ
ບໍ່ປະຕິເສດພຣະອົງ; ເພາະໂດຍການປະຕິ
ເສດພຣະອົງ ພວກທ່ານກໍປະຕິເສດສາດ
ສະດາ ແລະ ກົດນຳອີກ.
29 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຂໍເວົ້າ
ກັບພວກທ່ານວ່າ ທາງທີ່ຖືກຕ້ອງຄື ເຊື່ອ
ໃນພຣະຄຣິດ ແລະ ບໍ່ປະຕິເສດພຣະອົງ;
ແລະ ພຣະຄຣິດຄື ພຣະຜູ້ບໍລິສຸດຂອງ
ອິດສະຣາເອນ; ດັ່ງນັ້ນ ພວກທ່ານຈຶ່ງຕ້ອງ
ກາບລົງຕໍ່ພຣະພັກຂອງພຣະອົງ ແລະ
ນະມັດສະການພຣະອົງດ້ວຍສຸດ [ກ]ພະລັງ,
ຄວາມຄິດ, ແລະ ກຳລັງຂອງພວກທ່ານ,
ແລະ ທັງຈິດວິນຍານຂອງພວກທ່ານ, ແລະ
ຖ້າຫາກພວກທ່ານເຮັດແບບນີ້; ພວກທ່ານ
ຈະບໍ່ມີທາງຖືກຂັບໄລ່ອອກໄປ.
30 ແລະ ຕາບໃດທີ່ມັນຍັງສົມຄວນ,
ພວກທ່ານຕ້ອງຮັກສາການປະຕິບັດ ແລະ
[ກ]ພິທີການຕ່າງໆຂອງພຣະເຈົ້າຈົນກວ່າກົດ
ທີ່ປະທານໃຫ້ໂມເຊຈະສຳເລັດ.

## ບົດທີ 26

*ພຣະຄຣິດຈະປະຕິບັດສາດສະໜາກິດແກ່ຊາວນີໄຟ—ນີໄຟເຫັນລ່ວງໜ້າເຖິງຄວາມພິນາດຂອງຜູ້ຄົນຂອງເພິ່ນ—ພວກເຂົາຈະເວົ້າອອກຈາກພື້ນດິນ—ຄົນຕ່າງຊາດຈະສ້າງສາດສະໜາຈັກທີ່ບໍ່ຖືກຕ້ອງ ແລະ ການມົ້ວສຸມລັບຂຶ້ນ—ພຣະຜູ້ເປັນເຈົ້າຫ້າມບໍ່ໃຫ້ຜູ້ຄົນທຳການຫລອກລວງຂອງປະໂລຫິດ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ຫລັງຈາກພຣະຄຣິດໄດ້ [ກ]ລຸກ
ຂຶ້ນຈາກຄວາມຕາຍແລ້ວ ພຣະອົງຈະ
[ຂ]ສະແດງຕົວຂອງພຣະອົງເອງແກ່ພວກ
ທ່ານ, ລູກຫລານຂອງຂ້າພະເຈົ້າ ແລະ
ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ; ແລະ
ພຣະຄຳຊຶ່ງພຣະອົງຈະຮັບສັ່ງກັບພວກ
ທ່ານຈະເປັນ [ຄ]ກົດທີ່ພວກທ່ານຈະຕ້ອງປະ
ຕິບັດ.
2 ເພາະຈົ່ງເບິ່ງ, ຂ້າພະເຈົ້າຂໍເວົ້າກັບ

26 *ຂ* ລກ 10:23–24.
*ຄ* ຄມພ ເດັກ, ເດັກນ້ອຍ.
*ງ* ຄມພ ປົດບາບ, ການປົດບາບ.
28 *ກ* ມຊຍ 3:14.
*ຂ* ຄມພ ປະຈັກພະຍານ.
*ຄ* 2 ນຟ 33:10.
29 *ກ* ພບຍ 6:5; ມຣກ 12:29–31.
30 *ກ* ຄມພ ພິທີການ.
**26** 1 *ກ* 3 ນຟ 11:1–12.
*ຂ* 1 ນຟ 11:7; 12:6.
*ຄ* 3 ນຟ 15:2–10.

ພວກ ທ່ານ ວ່າ ຂ້າ ພະ ເຈົ້າ ເຫັນ ວ່າ ຄົນ
ຫລາຍ ລຸ້ນ ຄົນ ຈະ ຜ່ານ ໄປ ແລະ ຈະ ມີ ສົງ
ຄາມໃຫຍ່ ແລະ ການຂັດແຍ້ງໃນບັນດາຜູ້
ຄົນຂອງຂ້າພະເຈົ້າ.

3 ແລະ ຫລັງ ຈາກ ພຣະ ເມ ຊີ ອາ ຈະ ສະ
ເດັດ ມາ ຈະ ມີ [ກ]ເຄື່ອງໝາຍ ໄວ້ ໃຫ້ ກັບ ຜູ້
ຄົນຂອງຂ້າພະເຈົ້າກ່ຽວກັບການ [ຂ]ກຳເນີດ
ຂອງພຣະອົງ, ແລະ ກ່ຽວກັບການສິ້ນພຣະ
ຊົນ ແລະ ການຟື້ນຄືນພຣະຊົນຂອງພຣະ
ອົງອີກ, ແລະ ມື້ນັ້ນຈະຍິ່ງໃຫຍ່ ແລະ ເປັນ
ຕາຢ້ານສຳລັບຄົນຊົ່ວ, ເພາະພວກເຂົາຈະ
ຕາຍ ແລະ ພວກເຂົາຈະຕາຍເພາະພວກ
ເຂົາຂັບໄລ່ສາດສະດາ ແລະ ໄພ່ພົນຂອງ
ພຣະເຈົ້າອອກ ແລະ ແກວ່ງກ້ອນຫີນໃສ່
ເຂົາເຈົ້າ ແລະ ເຂັ່ນຂ້າເຂົາເຈົ້າ; ດັ່ງນັ້ນ
[ຄ]ເລືອດຂອງໄພ່ພົນຂອງພຣະເຈົ້າຈະຮ້ອງ
ຂຶ້ນຈາກພື້ນດິນໄປເຖິງພຣະເຈົ້າເພື່ອຟ້ອງ
ພວກເຂົາ.

4 ດັ່ງ ນັ້ນ, ຄົນ ທັງ ໝົດ ທີ່ ອວດ ດີ ແລະ
ເຮັດ ຄວາມ ຊົ່ວ ຮ້າຍ, ວັນ ເວລາ ຈະ ມາ
ເຖິງ ທີ່ຈະ [ກ]ເຜົາຜານພວກເຂົາໝົດ, ຈອມ
ໂຍທາໄດ້ກ່າວໄວ້, ເພາະພວກເຂົາຈະເປັນ
ຄືກັນກັບເຟືອງເຂົ້າ.

5 ແລະ ຄົນ ທີ່ຂ້າສາດສະດາ ແລະ ໄພ່
ພົນຂອງພຣະເຈົ້າ, ຄວາມເລິກຂອງແຜ່ນ
ດິນ ໂລກຈະ [ກ]ກືນກິນພວກ ເຂົາ ໃຫ້ໝົດ,
ຈອມໂຍທາໄດ້ກ່າວໄວ້; ແລະ [ຂ]ພູເຂົາຈະ
ທັບພວກເຂົາ, ລົມບ້າໝູຈະພັດພວກເຂົາ
ໄປ, ແລະ ອາຄານຈະເພພັງລົງມາທັບ
ພວກເຂົາ, ແລະ ບົດພວກເຂົາໃຫ້ເປັນ
ຕ່ອນ ແລະ ບົດພວກເຂົາໃຫ້ລະອຽດ.

6 ແລະ ພວກເຂົາຈະຖືກຢ້ຽມຢາມດ້ວຍ
ຟ້າຮ້ອງ, ດ້ວຍຟ້າແມບ, ແລະ ດ້ວຍແຜ່ນ
ດິນໄຫວ, ແລະ ດ້ວຍຄວາມພິນາດທຸກ
ຢ່າງ, ເພາະໄຟແຫ່ງພຣະພິໂລດຂອງພຣະ
ຜູ້ເປັນເຈົ້າຈະເກີດກັບພວກເຂົາ, ແລະ
ພວກເຂົາຈະເປັນຄືກັນກັບເຟືອງເຂົ້າ,
ແລະ ວັນທີ່ມາເຖິງຈະກືນກິນພວກເຂົາ,
ຈອມໂຍທາໄດ້ກ່າວ.

7 ໂອ້ ຄວາມ ເຈັບ ປວດ ແລະ ຄວາມ
ປວດລ້າວຂອງຈິດວິນຍານຂອງຂ້າພະເຈົ້າ
ເພາະການສູນເສຍຜູ້ຖືກຂ້າຕາຍ ຊຶ່ງເປັນ
ຄົນຂອງຂ້າພະເຈົ້າ! ເພາະວ່າຂ້າພະເຈົ້າ
ນີໄຟເຫັນມັນແລ້ວ, ແລະ ມັນແທບຈະກືນ
ຂ້າພະເຈົ້າຕໍ່ໜ້າທີ່ປະທັບຂອງພຣະຜູ້ເປັນ
ເຈົ້າ; ແຕ່ຂ້າພະເຈົ້າຕ້ອງຮ້ອງທູນພຣະເຈົ້າ
ຂອງຂ້າພະເຈົ້າວ່າ: ເສັ້ນທາງຂອງພຣະອົງ
[ກ]ທ່ຽງທຳ.

8 ແຕ່ ຈົ່ງ ເບິ່ງ, ຄົນ ຊອບ ທຳ ທີ່ ເຊື່ອ ຟັງ
ຄຳເວົ້າຂອງສາດສະດາ, ແລະ ບໍ່ທຳລາຍ
ເພິ່ນແຕ່ມຸ້ງຫາພຣະຄຣິດ ດ້ວຍຄວາມໝັ້ນ
ຄົງເພື່ອເຄື່ອງໝາຍທີ່ປະທານໄວ້ທັງທີ່ມີ
[ກ]ການຂົ່ມເຫັງທຸກຢ່າງ—ຈົ່ງເບິ່ງ, ພວກ
ເຂົາຄືຄົນທີ່ຈະ [ຂ]ບໍ່ຕາຍ.

9 ແຕ່ ພຣະ ບຸດ ແຫ່ງຄວາມ ຊອບ ທຳ
ຈະ [ກ]ປະກົດແກ່ພວກເຂົາ; ແລະ ພຣະອົງ
ຈະ [ຂ]ປິ່ນປົວພວກເຂົາໃຫ້ຫາຍດີ, ແລະ
ພວກເຂົາຈະມີ [ຄ]ສັນຕິສຸກກັບພຣະອົງຈົນ

3 *ກ* 1 ນຟ 12:4–6.
ຄມພ ເຄື່ອງໝາຍ.
*ຂ* ຄມພ ພຣະເຢຊູຄຣິດ—
ການທຳນາຍກ່ຽວກັບ
ການກຳເນີດ ແລະ
ການສິ້ນພຣະຊົນຂອງ
ພຣະເຢຊູຄຣິດ.
*ຄ* ປຖກ 4:10;
2 ນຟ 28:10;
ມມ 8:27.
4 *ກ* 3 ນຟ 8:14–24; 9:3, 9.
5 *ກ* 1 ນຟ 19:11;
3 ນຟ 10:14.
*ຂ* 3 ນຟ 8:10; 9:5–8.
7 *ກ* ຄມພ ຍຸດຕິທຳ,
ຄວາມຍຸດຕິທຳ.
8 *ກ* ຄມພ ຂົ່ມເຫັງ,
ການຂົ່ມເຫັງ.
*ຂ* 3 ນຟ 10:12–13.
9 *ກ* 3 ນຟ 11:8–15.
*ຂ* 3 ນຟ 17:7–9.
*ຄ* 4 ນຟ 1:1–4.

ວ່າ [ງ]ສາມລຸ້ນຄົນຜ່ານໄປ, ແລະ ຄົນຢ່າງ
ຫລວງຫລາຍຂອງລຸ້ນ [ຈ]ທີສີ່ຈະຜ່ານໄປໃນ
ຄວາມຊອບທຳ.
10 ແລະ ເມື່ອສິ່ງເຫລົ່ານີ້ຜ່ານໄປແລ້ວ
[ກ]ຄວາມພິນາດອັນວ່ອງໄວຈະມາຫາຜູ້ຄົນ
ຂອງຂ້າພະເຈົ້າ; ເພາະທັງທີ່ຈິດວິນຍານ
ຂອງຂ້າພະເຈົ້າເຈັບປວດ, ຂ້າພະເຈົ້າກໍຍັງ
ເຫັນມັນ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຮູ້ວ່າ ມັນ
ຈະເກີດຂຶ້ນ; ແລະ ພວກເຂົາຂາຍຕົວເອງ
ໄປລ້າໆເພື່ອລາງວັນຂອງຄວາມຈອງຫອງ
ຂອງພວກເຂົາ ແລະ ຄວາມໂງ່ຂອງພວກ
ເຂົາ, ພວກເຂົາຈະເກັບກ່ຽວຄວາມພິນາດ;
ເພາະພວກເຂົາຍອມຕົວໃຫ້ກັບມານ ແລະ
ເລືອກເອົາວຽກງານແຫ່ງຄວາມມືດແທນ
ຄວາມສະຫວ່າງ, ສະນັ້ນ ພວກເຂົາຈຶ່ງຕ້ອງ
ລົງໄປສູ່ [ຂ]ນະລົກ.
11 ເພາະພຣະວິນຍານຂອງພຣະຜູ້ເປັນ
ເຈົ້າຈະບໍ່ [ກ]ພະຍາຍາມກັບມະນຸດສະເໝີ
ໄປ. ແລະ ເວລາພຣະວິນຍານເຊົາພະຍາ
ຍາມກັບມະນຸດ ເມື່ອນັ້ນຄວາມພິນາດອັນ
ວ່ອງໄວຍ່ອມມາເຖິງ, ແລະ ນີ້ເຮັດໃຫ້ຈິດ
ວິນຍານຂອງຂ້າພະເຈົ້າໂສກເສົ້າ.
12 ແລະ ຄືກັນກັບຂ້າພະເຈົ້າໄດ້ເວົ້າ
ແລ້ວກ່ຽວກັບການເຮັດໃຫ້ [ກ]ຊາວຢິວ [ຂ]ຮັບ
ຮູ້ວ່າ ພຣະເຢຊູຄື [ຄ]ພຣະຄຣິດອົງແທ້ຈິງ,
ມັນຈຶ່ງຈຳເປັນທີ່ຄົນຕ່າງຊາດຕ້ອງຮັບຮູ້ຄື
ກັນວ່າ ພຣະເຢຊູຄືພຣະຄຣິດພຣະເຈົ້າຜູ້
ສະຖິດນິລັນດອນ;
13 ແລະ ວ່າພຣະອົງຈະສະແດງພຣະ
ອົງເອງໃຫ້ປະຈັກແກ່ຄົນທັງໝົດທີ່ເຊື່ອໃນ
ພຣະອົງໂດຍອຳນາດຂອງ [ກ]ພຣະວິນຍານ
ບໍລິສຸດ; ແທ້ຈິງແລ້ວ, ແກ່ທຸກປະຊາຊາດ,
ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນ
ທັງປວງໂດຍການເຮັດສິ່ງມະຫັດສະຈັນ,
ເຄື່ອງໝາຍ, ແລະ ການແປກປະຫລາດອັນ
ຍິ່ງໃຫຍ່ໃນບັນດາລູກຫລານມະນຸດຕາມ
ສັດທາແຂອງພວກເຂົາ.
14 ແຕ່ ຈົ່ງເບິ່ງ, ຂ້າພະເຈົ້າທຳນາຍຕໍ່
ພວກທ່ານກ່ຽວກັບ [ກ]ຍຸກສຸດທ້າຍກ່ຽວກັບ
ວັນທີ່ອົງພຣະຜູ້ເປັນເຈົ້າຈະ [ຂ]ນຳສິ່ງເຫລົ່າ
ນີ້ອອກມາໃຫ້ລູກຫລານມະນຸດ.
15 ແລະ ຫລັງຈາກນີ້ລູກຫລານຂອງຂ້າ
ພະເຈົ້າ ແລະ ລູກຫລານຂອງອ້າຍນ້ອງ
ຂອງຂ້າພະເຈົ້າຈະເສື່ອມໂຊມຢູ່ໃນຄວາມ
ບໍ່ເຊື່ອຖື, ແລະ ຈະຖືກຄົນຕ່າງຊາດລົງທັນ;
ແທ້ຈິງແລ້ວ, ຫລັງຈາກອົງພຣະຜູ້ເປັນເຈົ້າ
ຈະຕັ້ງຄ້າຍໂດຍອ້ອມຮອບເພື່ອຕໍ່ຕ້ານ
ພວກເຂົາ ແລະ ຈະອ້ອມຮອບພວກເຂົາ
ດ້ວຍພູ ແລະ ສ້າງປ້ອມຕໍ່ຕ້ານພວກເຂົາ,
ແລະ ຫລັງຈາກພວກເຂົາຈະຖືກເອົາລົງໄປ
ຢູ່ໃນພື້ນດິນຈົນວ່າ ພວກເຂົາຢູ່ບໍ່ໄດ້, ເຖິງ
ຢ່າງໃດກໍຕາມ ຄຳເວົ້າຂອງຄົນຊອບທຳຈະ
ຖືກບັນທຶກໄວ້ ແລະ ຄຳອະທິຖານຂອງຄົນ
ທີ່ຊື່ສັດຈະຖືກໄດ້ຍິນ, ແລະ ຄົນທັງຫລາຍ
ທີ່ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື ຈະບໍ່ຖືກ
ລືມ.
16 ເພາະຄົນທີ່ຈະຖືກທຳລາຍຈະ [ກ]ເວົ້າ
ກັບພວກເຂົາຈາກພື້ນດິນ, ແລະ ຄຳເວົ້າ
ຂອງຄົນເຫລົ່ານັ້ນຈະຄ່ອຍດັງຂຶ້ນມາຈາກ
ຂີ້ຝຸ່ນ, ແລະ ສຽງຂອງພວກເຂົາຈະເປັນຄື

---

9 *ງ* 1 ນຟ 12:11–12; 3 ນຟ 27:30–32.
*ຈ* ແອວ 45:10–12; ຮລມ 13:9–10.
10 *ກ* ແອວ 45:9–14; ມມ 8:1–9.
*ຂ* ຄມພ ນະລົກ.
11 *ກ* ອທ 2:15.
12 *ກ* 2 ນຟ 30:7; ມມ 5:14. ຄມພ ຊາວຢິວ.
*ຂ* 2 ນຟ 25:18.
*ຄ* ມມ 3:21.
13 *ກ* ຄມພ ພຣະວິນຍານບໍລິສຸດ.
14 *ກ* ຄມພ ຍຸກສຸດທ້າຍ.
*ຂ* ຄມພ ການຟື້ນຟູພຣະກິດຕິຄຸນ.
16 *ກ* ອຊຢ 29:4; ມຣນ 10:27; ມຊ 7:62. ຄມພ ພຣະຄຳພີມໍມອນ.

ກັບຄົນທີ່ມີວິນຍານອັນຄຸ້ນເຄີຍ; ເພາະອົງ
ພຣະຜູ້ເປັນເຈົ້າ ຈະປະທານອຳນາດໃຫ້
ເຂົາເພື່ອເຂົາຈະໄດ້ສື່ມໃສ່ຫູກຸ່ງວກັບພວກ
ເຂົາ ຄືກັບວ່າ ມັນຂຶ້ນມາຈາກພື້ນດິນ; ແລະ
ຄຳເວົ້າຂອງຄົນເຫລົ່ານັ້ນຈະສື່ມຈາກຂີ້
ຝຸ່ນ.
17 ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງ
ນີ້: ພວກເຂົາຈະ [ກ]ບັນທຶກເລື່ອງທີ່ຈະຖືກ
ເຮັດຂຶ້ນໃນບັນດາພວກເຂົາ ແລະ ມັນຈະ
ຖືກບັນທຶກ ແລະ ຜະນຶກໄວ້ໃນໜັງສືເຫລັ້ມ
ໜຶ່ງ, ແລະ ຄົນທີ່ເສື່ອມໂຊມຢູ່ໃນຄວາມບໍ່
ເຊື່ອຖື ຈະບໍ່ໄດ້ມັນ, ເພາະພວກເຂົາ [ຂ]ພະ
ຍາຍາມທຳລາຍສິ່ງຂອງຂອງພຣະເຈົ້າ.
18 ດັ່ງນັ້ນ, ຄືກັນກັບຄົນທີ່ຖືກທຳລາຍ
ຍ່ອມຖືກທຳລາຍຢ່າງວ່ອງໄວ ແລະ ຝູງຊົນ
ທີ່ເປັນຕາໜ້າຢ້ານຂອງພວກເຂົາ ຈະເປັນ
ຄືກັນກັບ [ກ]ຂີ້ແກບທີ່ໝົດໄປ—ແທ້ຈິງແລ້ວ,
ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ມັນຈະ
ໄປໃນທັນໃດຢ່າງວ່ອງໄວ—
19 ແລະ ເຫດການຈະບັງເກີດຂຶ້ນຄື, ຄົນ
ທີ່ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື ຈະຖືກມື
ຂອງຄົນຕ່າງຊາດ [ກ]ລົງທັນ.
20 ແລະ ຄົນຕ່າງຊາດເປັ່ງສຽງດ້ວຍ
[ກ]ຄວາມທະນົງຕົວໃນສາຍຕາຂອງພວກ
ເຂົາ, ແລະ [ຂ]ເຕະສະດຸດ ເພາະຄວາມຍິ່ງ
ໃຫຍ່ຂອງສິ່ງທີ່ເຮັດໃຫ້ພວກເຂົາເຕະ [ຄ]ສະ
ດຸດ, ຄືພວກເຂົາສ້າງ [ງ]ສາດສະໜາຈັກຂຶ້ນ
ຢ່າງຫລວງຫລາຍ; ເຖິງຢ່າງໃດກໍຕາມ,
ພວກເຂົາຍັງບໍ່ທົວຊາຕໍ່ອຳນາດ ແລະ ສິ່ງ
ມະຫັດສະຈັນຂອງພຣະເຈົ້າ, ແລະ ສິດ
ສອນເຖິງ [ຈ]ປັນຍາຂອງຕົນເອງ, ເພື່ອພວກ
ເຂົາຈະຫາຜົນປະໂຫຍດ ແລະ ບົດຢ່ຳຢີ
[ສ]ໜ້າຂອງຄົນຍາກຈົນ.
21 ແລະ ມີສາດສະໜາຈັກອັນຫລວງ
ຫລາຍຖືກສ້າງຂຶ້ນ ຊຶ່ງເຮັດໃຫ້ເກີດ [ກ]ການ
ອິດສາບັງບຽດ, ການຜິດຖຽງກັນ ແລະ
ເຈດຕະນາຮ້າຍ.
22 ແລະ ມີ [ກ]ການມົ້ວສຸມລັບອີກ, ເຖິງ
ແມ່ນຄືກັນກັບໃນສະໄໝບູຮານຕາມການ
ມົ້ວສຸມຂອງມານ ເພາະມັນເປັນຜູ້ສ້າງສິ່ງ
ທັງໝົດນີ້; ແທ້ຈິງແລ້ວ, ເປັນຜູ້ສ້າງການ
ຄາດຕະກຳ ແລະ ວຽກງານແຫ່ງຄວາມມືດ;
ແທ້ຈິງແລ້ວ, ແລະ ມັນຈະລາກຄໍພວກນັ້ນ
ໄປດ້ວຍເຊືອກປ່ານຈົນວ່າຜູກພວກນັ້ນໄວ້
ດ້ວຍເຊືອກອັນໝັ້ນຂອງມັນຕະຫລອດໄປ.
23 ເພາະຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຂ້າພະເຈົ້າຂໍເວົ້າກັບພວກ
ທ່ານວ່າ ອົງພຣະຜູ້ເປັນເຈົ້າຈະບໍ່ທຳງານ
ໃນຄວາມມືດ.
24 ພຣະອົງຍ່ອມຈະບໍ່ກະທຳສິ່ງໃດນອກ
ຈາກມັນຈະເປັນຜົນປະໂຫຍດແກ່ໂລກ;
ເພາະພຣະອົງ [ກ]ຮັກໂລກຈົນຍອມສະລະ
ຊີວິດຂອງພຣະອົງ ເພື່ອຈະໄດ້ພາມະນຸດ
[ຂ]ທັງປວງມາຫາພຣະອົງ. ດັ່ງນັ້ນ, ພຣະອົງ
ຈຶ່ງບໍ່ບັນຊາຜູ້ໃດວ່າ ພວກເຂົາຈະບໍ່ໄດ້ຮັບ
ສ່ວນຄວາມລອດຈາກພຣະອົງ.
25 ຈົ່ງເບິ່ງ, ພຣະອົງໄດ້ຮ້ອງບອກຜູ້ໃດບໍ
ວ່າ: ຈົ່ງໄປຈາກເຮົາ? ຈົ່ງເບິ່ງ, ຂ້າພະເຈົ້າ
ເວົ້າກັບພວກທ່ານວ່າ ບໍ່ເລີຍ; ແຕ່ພຣະອົງ
ກ່າວວ່າ: ເຈົ້າທັງຫລາຍທີ່ສຸດຂອງແຜ່ນດິນ

17 *ກ* 2 ນຟ 29:12.
*ຂ* ອນ 1:14.
18 *ກ* ມມ 5:16–18.
19 *ກ* 3 ນຟ 16:8–9; 20:27–28.
20 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
*ຂ* 1 ນຟ 13:29, 34.
ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຄ* ອຊກ 14:4.
*ງ* 1 ນຟ 14:10; 22:23; ມມ 8:28.
*ຈ* 2 ນຟ 9:28; ມມ 9:7–8.
*ສ* ອຊຢ 3:15; 2 ນຟ 13:15.
21 *ກ* ຄມພ ອິດສາ.
22 *ກ* ຄມພ ການມົ້ວສຸມລັບ.
24 *ກ* ຢຮ 3:16.
*ຂ* 3 ນຟ 27:14–15.

ໂລກຈົ່ງ [ກ]ມາຫາເຮົາເຖີດ, ຈົ່ງ [ຂ]ຊື້ນົມ ແລະ
ນ້ຳເຜີ້ງໂດຍປາດສະຈາກເງິນ ແລະ ປາດ
ສະຈາກລາຄາ.
26 ຈົ່ງເບິ່ງ, ພຣະອົງບັນຊາໃຫ້ຜູ້ໃດບໍວ່າ
ພວກເຂົາຄວນອອກຈາກທຳມະສາລາ ຫລື
ອອກຈາກສະຖານທີ່ນະມັດສະການ? ຈົ່ງ
ເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ບໍ່
ເລີຍ.
27 ພຣະ ອົງ ໄດ້ ບັນ ຊາ ໃຫ້ ຜູ້ ໃດ ບໍ ວ່າ
ພວກ ເຂົາບໍ່ ຄວນ ຮັບ ສ່ວນ [ກ]ຄວາມ ລອດ
ຈາກ ພຣະ ອົງ? ຈົ່ງ ເບິ່ງ ຂ້າ ພະ ເຈົ້າ ເວົ້າ
ກັບ ພວກທ່ານ ວ່າ, ບໍ່ ເລີຍ; ແຕ່ພຣະ ອົງ
[ຂ]ປະທານໃຫ້ມະນຸດທັງປວງລ້າໆ; ແລະ
ພຣະອົງບັນຊາຜູ້ຄົນຂອງພຣະອົງວ່າ ພວກ
ເຂົາຄວນຊັກຊວນມະນຸດທັງປວງໃຫ້ມາ
ເຖິງ [ຄ]ການກັບໃຈ.
28 ຈົ່ງ ເບິ່ງ, ພຣະຜູ້ເປັນເຈົ້າໄດ້ບັນຊາ
ຜູ້ໃດບໍວ່າ ພວກເຂົາບໍ່ຄວນຮັບສ່ວນພຣະ
ກະລຸນາທິຄຸນຂອງພຣະອົງ? ຈົ່ງເບິ່ງ ຂ້າ
ພະເຈົ້າເວົ້າກັບພວກທ່ານວ່າ, ບໍ່ເລີຍ; ແຕ່
ມະນຸດ [ກ]ທັງປວງມີສິດເທົ່າທຽມກັນ ແລະ ບໍ່
ມີໃຜຖືກຫ້າມ.
29 ພຣະອົງໄດ້ບັນຊາວ່າ ຈະບໍ່ມີ [ກ]ການ
ຫລອກລວງຂອງປະໂລຫິດ, ເພາະຈົ່ງເບິ່ງ,
ການຫລອກລວງຂອງປະໂລຫິດຄື ມະນຸດ
ສັ່ງສອນ ແລະ ຕັ້ງຕົນເອງຂຶ້ນເປັນແສງສະ
ຫວ່າງໃຫ້ໂລກ ເພື່ອພວກເຂົາຈະໄດ້ຫາ
ຜົນປະໂຫຍດ ແລະ [ຂ]ສັນລະເສີນຂອງທາງ
ໂລກ; ແຕ່ພວກເຂົາບໍ່ໄດ້ພະຍາຍາມເພື່ອ
ຄວາມຜາສຸກຂອງຊີໂອນ.
30 ຈົ່ງ ເບິ່ງ, ພຣະ ຜູ້ ເປັນ ເຈົ້າ ຫ້າມ ສິ່ງ
ນີ້; ດັ່ງນັ້ນ, ອົງພຣະຜູ້ເປັນເຈົ້າຈຶ່ງປະທານ
ພຣະບັນຍັດໄວ້ຂໍ້ໜຶ່ງວ່າ ມະນຸດທັງປວງ
ຄວນມີ [ກ]ຄວາມໃຈບຸນ ຊຶ່ງຄວາມໃຈບຸນ
ຄື [ຂ]ຄວາມຮັກ. ແລະ ຖ້າຫາກພວກເຂົາບໍ່
ມີຄວາມໃຈບຸນ ພວກເຂົາກໍບໍ່ເປັນອັນໃດ
ເລີຍ. ດັ່ງນັ້ນ, ຖ້າຫາກພວກເຂົາມີຄວາມ
ໃຈບຸນ ພວກເຂົາຈະບໍ່ຍອມໃຫ້ຄົນງານໃນ
ຊີໂອນຕາຍ.
31 ແຕ່ຄົນງານໃນ [ກ]ຊີໂອນຈະເຮັດການ
ເພື່ອຊີໂອນ; ເພາະຖ້າຫາກພວກເຂົາເຮັດ
ການເພື່ອ [ຂ]ເງິນ ພວກເຂົາຈະຕ້ອງຕາຍ.
32 ແລະ ອີກຢ່າງໜຶ່ງ, ອົງພຣະຜູ້ເປັນ
ເຈົ້າໄດ້ [ກ]ບັນຊາວ່າ ມະນຸດຈະບໍ່ເຮັດການ
ຄາດຕະກຳ; ວ່າພວກເຂົາຈະບໍ່ຕົວະ; ວ່າ
ພວກ ເຂົາ ຈະບໍ່ ລັກ; ວ່າ ພວກ ເຂົາ ຈະບໍ່
ກ່າວພຣະນາມຂອງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຂົາ [ຂ]ໄປໃນທາງ
ທີ່ຜິດ; ວ່າພວກເຂົາຈະບໍ່ອິດສາ; ວ່າພວກ
ເຂົາຈະບໍ່ມີເຈດຕະນາຮ້າຍ; ວ່າພວກເຂົາ
ຈະບໍ່ມີການຂັດແຍ້ງກັນ; ວ່າພວກເຂົາຈະ
ບໍ່ທຳການໂສເພນີ; ແລະ ວ່າພວກເຂົາຈະ
ບໍ່ເຮັດສິ່ງເຫລົ່ານີ້ເລີຍ; ເພາະວ່າຜູ້ໃດທີ່
ເຮັດຈະຕ້ອງຕາຍ.
33 ເພາະວ່າຄວາມອະທຳເຫລົ່ານີ້ບໍ່ໄດ້
ມາຈາກພຣະຜູ້ເປັນເຈົ້າເລີຍ; ເພາະພຣະ
ອົງກະທຳແຕ່ສິ່ງທີ່ດີໃນບັນດາລູກຫລານ
ມະນຸດ; ແລະ ພຣະອົງບໍ່ກະທຳສິ່ງໃດເລີຍ
ນອກຈາກມັນຈະແຈ່ມແຈ້ງຕໍ່ລູກຫລານ
ມະນຸດ; ແລະ ພຣະອົງຈະເຊື້ອເຊີນເຂົາທັງ

25 ກ ແອວ 5:33–35;
3 ນຟ 9:13–14.
ຂ ອຊຢ 55:1–2.
27 ກ ຄນພ ລອດ, ຄວາມລອດ.
ຂ ອຟຊ 2:8;
2 ນຟ 25:23.
ຄ ຄນພ ກັບໃຈ, ການກັບໃຈ.
28 ກ ຣມ 2:11;
1 ນຟ 17:33–35.
29 ກ ຄນພ ການຫລອກລວງ
ຂອງປະໂລຫິດ.
ຂ ຄພ 121:34–37.
30 ກ ມຣນ 7:47–48.
ຄນພ ໃຈບຸນ, ຄວາມໃຈບຸນ.
ຂ ຄນພ ຮັກ, ຄວາມຮັກ.
31 ກ ຄນພ ຊີໂອນ.
ຂ ຢຄ 2:17–19;
ຄພ 11:7; 38:39.
32 ກ ຄນພ ພຣະບັນຍັດ
ຂອງພຣະເຈົ້າ.
ຂ ຄນພ ຄຳຫຍາບຄາຍ.

ໝົດໃຫ້ເຂົ້າມາຫາພຣະອົງ; ແລະ ຮັບສ່ວນ
ພຣະກະລຸນາທິຄຸນ ຂອງ ພຣະອົງ; ແລະ
ພຣະອົງບໍ່ [ກ]ປະຕິເສດຜູ້ໃດທີ່ມາຫາພຣະ
ອົງເລີຍ, ບໍ່ວ່າດຳ ແລະ ຂາວ, ຂ້າທາດ
ແລະ ຜູ້ເປັນອິດສະລະ, ຊາຍ ແລະ ຍິງ;
ແລະ ພຣະອົງລະນຶກເຖິງ [ຂ]ຄົນທີ່ບໍ່ມີສາດ
ສະໜານຳອີກ; ແລະ [ຄ]ທຸກຄົນເທົ່າທຽມ
ກັນໝົດສຳລັບພຣະເຈົ້າ, ທັງຊາວຢິວ ແລະ
ຄົນຕ່າງຊາດ.

## ບົດທີ 27

*ຄວາມມືດ ແລະ ການປະຖິ້ມຄວາມເຊື່ອຈະປົກຄຸມແຜ່ນດິນໂລກໃນຍຸກສຸດທ້າຍ—ພຣະຄຳພີມໍມອນຈະອອກມາ—ພະຍານສາມຄົນຈະເປັນພະຍານເຖິງພຣະຄຳພີນີ້—ຜູ້ທີ່ມີການສຶກສາຈະເວົ້າວ່າລາວບໍ່ສາມາດອ່ານພຣະຄຳພີ ຊຶ່ງຜະນຶກໄວ້ນີ້—ພຣະຜູ້ເປັນເຈົ້າຈະທຳງານແປກປະຫລາດ ແລະ ອັດສະຈັນ—ປຽບທຽບກັບເອຊາຢາ 29. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແຕ່ຈົ່ງເບິ່ງ, ໃນ [ກ]ຍຸກສຸດທ້າຍ ຫລື ໃນ
ຍຸກຂອງຄົນຕ່າງຊາດ—ແທ້ຈິງແລ້ວ, ຈົ່ງ
ເບິ່ງ ປະຊາຊາດທັງໝົດຂອງຄົນຕ່າງຊາດ
ແລະ ຊາວຢິວ, ທຸກຄົນທີ່ຈະມາຫາແຜ່ນ
ດິນນີ້ ແລະ ຄົນທີ່ຈະຢູ່ໃນແຜ່ນດິນອື່ນ, ແທ້
ຈິງແລ້ວ, ແມ່ນໃນທົ່ວແຜ່ນດິນຂອງແຜ່ນ
ດິນໂລກ, ຈົ່ງເບິ່ງ, ພວກເຂົາຈະເມົາດ້ວຍ
ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ
ນາໆປະການ—
2 ແລະ ເມື່ອມື້ນັ້ນມາເຖິງ ຈອມໂຍທາຈະ
ສະເດັດມາຢ້ຽມຢາມພວກເຂົາດ້ວຍສຽງ
ຟ້າຮ້ອງ ແລະ ແຜ່ນດິນໄຫວ, ແລະ ດ້ວຍ
ສຽງກຶກກ້ອງຢ່າງໃຫຍ່ຫລວງ, ດ້ວຍລົມພະ
ຍຸ, ແລະ ດ້ວຍພະຍຸຝົນຟ້າຄະນອງ, ແລະ
[ກ]ແປວໄຟທີ່ຈະເຜົາຜານ.
3 ແລະ [ກ]ປະຊາຊາດທັງໝົດທີ່ [ຂ]ຕໍ່ສູ້ກັບ
ຊີໂອນ ແລະ ເຮັດໃຫ້ມັນເດືອດຮ້ອນຈະ
ເປັນຄືກັນກັບຄວາມຝັນຂອງພາບນິມິດໃນ
ຕອນກາງຄືນ; ແທ້ຈິງແລ້ວ, ມັນຈະບັງເກີດ
ຂຶ້ນກັບພວກເຂົາ ຈະເປັນດັ່ງຄົນຫິວໂຫຍ
ທີ່ຝັນໄປ, ແຕ່ຈົ່ງເບິ່ງ ເຂົາໄດ້ກິນແຕ່ເມື່ອ
ເຂົາຕື່ນຂຶ້ນແລ້ວ ຈິດວິນຍານຂອງເຂົາຈະ
ວ່າງເປົ່າ ຫລື ຄືກັນກັບຄົນຫິວນ້ຳທີ່ຝັນໄປ,
ແລະ ຈົ່ງເບິ່ງ ເຂົາໄດ້ດື່ມແຕ່ເມື່ອເຂົາຕື່ນ
ຂຶ້ນແລ້ວ, ເຂົາຈະເຫັນວ່າເຂົາອ່ອນເພຍ
ແລະ ຈິດວິນຍານຂອງເຂົາມີຄວາມຫິວ
ໂຫຍ; ແທ້ຈິງແລ້ວ, ແມ່ນຝູງຊົນຂອງປະຊາ
ຊາດທັງໝົດທີ່ຕໍ່ສູ້ກັບພູຊີໂອນຈະເປັນເຊັ່ນ
ນັ້ນ.
4 ເພາະ ຈົ່ງ ເບິ່ງ, ເຈົ້າ ທັງ ຫລາຍ ທີ່ ສ້າງ
ຄວາມຊົ່ວຮ້າຍ, ຈົ່ງຫ້າມຕົນເອງ ແລະ ປະ
ຫລາດໃຈເພາະເຈົ້າຈະຮ້ອງອອກມາ ແລະ
ຮ້ອງໄຫ້; ແທ້ຈິງແລ້ວ, ເຈົ້າຈະເມົາແຕ່ບໍ່
ແມ່ນດ້ວຍເຫລົ້າອະງຸ່ນ, ເຈົ້າຈະໂຊເຊແຕ່
ບໍ່ແມ່ນດ້ວຍເຄື່ອງທີ່ມຶນເມົາ.
5 ເພາະ ຈົ່ງ ເບິ່ງ, ພຣະຜູ້ເປັນເຈົ້າຈະ
ຖອກວິນຍານແຫ່ງການນອນຫລັບໃຫ້ເຈົ້າ.
ເພາະຈົ່ງເບິ່ງ, ເຈົ້າຫລັບຕາ ແລະ ເຈົ້າປະຕິ
ເສດສາດສະດາ, ແລະ ພຣະອົງໄດ້ປິດບັງ
ຜູ້ປົກຄອງຂອງເຈົ້າ ແລະ ຜູ້ພະຍາກອນໄວ້
ເພາະຄວາມຊົ່ວຮ້າຍຂອງເຈົ້າ.
6 ແລະ ເຫດການຈະບັງເກີດຂຶ້ນຄື ອົງ
ພຣະຜູ້ເປັນເຈົ້າຈະນຳເອົາຂໍ້ຄວາມຂອງ

33 *ກ* ກຈກ 10:9–35, 44–45.
*ຂ* ແອວ 26:37.
*ຄ* ຣມ 2:11;
1 ນຟ 17:35.

**27** 1 *ກ* ຄມພ ຍຸກສຸດທ້າຍ.
2 *ກ* ອຊຢ 24:6; 66:15–16;
ຢຄ 6:3;
3 ນຟ 25:1.

3 *ກ* ອຊຢ 29:7–8.
*ຂ* 1 ນຟ 22:14.

[ກ]ໜັງສືເຫລັ້ມໜຶ່ງມາຫາ [ຂ]ເຈົ້າ ແລະ ມັນຈະ
ເປັນຂໍ້ຄວາມຂອງຄົນຊຶ່ງລ່ວງລັບໄປແລ້ວ.
7 ແລະ ຈົ່ງເບິ່ງ ໜັງສືນັ້ນຈະຖືກ [ກ]ຜະ
ນຶກໄວ້ ແລະ ໜັງສືຈະເປັນ [ຂ]ການເປີດເຜີຍ
ຈາກພຣະເຈົ້າ, ນັບ ຕັ້ງ ແຕ່ການ ເລີ່ມ ຕົ້ນ
ຂອງໂລກເຖິງ [ຄ]ການສິ້ນສຸດຂອງມັນ.
8 ດັ່ງນັ້ນ, ຍ້ອນສິ່ງຊຶ່ງຖືກ [ກ]ຜະນຶກໄວ້
ແລ້ວ ຈຶ່ງ [ຂ]ຈະ ບໍ່ມອບ ສິ່ງ ຊຶ່ງ ຖືກຜະນຶກ
ໄວ້ໃຫ້ ໃນວັນແຫ່ງຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງຂອງຜູ້ຄົນ. ດັ່ງນັ້ນ ໜັງ
ສືຈະໄດ້ຖືກຮັກສາໄວ້ຈາກພວກເຂົາ.
9 ແຕ່ ຈະ ມອບ ໜັງ ສື ໃຫ້ [ກ]ຊາຍ ຜູ້ໜຶ່ງ
ແລະ ເຂົາຈະມອບຂໍ້ຄວາມໃນໜັງສື ຊຶ່ງ
ເປັນຂໍ້ຄວາມຂອງຄົນທີ່ລ່ວງລັບໄປແລ້ວສູ່
ພື້ນດິນ, ແລະ ລາວຈະມອບຂໍ້ຄວາມນີ້ໃຫ້
[ຂ]ອີກຜູ້ໜຶ່ງ;
10 ແຕ່ຂໍ້ຄວາມທີ່ຖືກຜະນຶກໄວ້ລາວຈະ
ບໍ່ມອບໃຫ້ ແລະ ລາວຈະບໍ່ມອບໜັງສືໃຫ້
ເພາະໜັງສືຈະຖືກຜະນຶກໄວ້ໂດຍອຳນາດ
ຂອງພຣະເຈົ້າ, ແລະ ການເປີດເຜີຍ ຊຶ່ງຖືກ
ຜະນຶກໄວ້ຈະໄດ້ຖືກຮັກສາໄວ້ໃນໜັງສືຈົນ
ເຖິງເວລາອັນເໝາະສົມຂອງພຣະຜູ້ເປັນ
ເຈົ້າ, ທີ່ມັນຈະອອກມາ; ເພາະຈົ່ງເບິ່ງ, ມັນ
ຈະເປີດເຜີຍເລື່ອງທັງໝົດ ນັບຕັ້ງແຕ່ການ
ວາງຮາກຖານຂອງໂລກຈົນເຖິງການສິ້ນ
ສຸດຂອງມັນ.
11 ແລະ ວັນ ນັ້ນ ຈະ ມາ ເຖິງ ເມື່ອ ຈະ
ອ່ານຂໍ້ຄວາມໃນໜັງສື ຊຶ່ງຖືກຜະນຶກໄວ້
ເທິງຫລັງຄາເຮືອນ ແລະ ຈະອ່ານມັນໂດຍ
ອຳນາດຂອງພຣະຄຣິດ; ແລະ ທຸກເລື່ອງ
ຈະ ຖືກ [ກ]ເປີດ ເຜີຍຕໍ່ ລູກຫລານມະນຸດ
ແລະ ຊຶ່ງເຄີຍເປັນຢູ່ມາແລ້ວໃນບັນດາລູກ
ຫລານມະນຸດ, ແລະ ເຄີຍເປັນຢູ່ຈົນເຖິງທີ່
ສຸດຂອງແຜ່ນດິນໂລກ.
12 ດັ່ງນັ້ນ, ໃນມື້ນັ້ນ ເມື່ອຈະມອບໜັງສື
ໃຫ້ຊາຍຜູ້ນັ້ນທີ່ຂ້າພະເຈົ້າເວົ້າເຖິງ, ໜັງສື
ຈະຖືກເຊື່ອງໄວ້ໃຫ້ພົ້ນຈາກສາຍຕາຂອງ
ໂລກ, ເພື່ອຈະບໍ່ໃຫ້ມີສາຍຕາຂອງຜູ້ໃດ
ເຫັນ ນອກຈາກ [ກ]ພະຍານ [ຂ]ສາມຄົນຈະ
ເຫັນ ໂດຍອຳນາດຂອງພຣະເຈົ້າ ນອກ
ເໜືອ ຈາກ ຄົນ ທີ່ ຈະ ໄດ້ ຮັບມອບ ໜັງສື;
ແລະ ພວກເຂົາຈະໃຫ້ຖ້ອຍຄຳເຖິງຄວາມ
ຈິງຂອງໜັງສື ແລະ ສິ່ງທີ່ຢູ່ໃນນັ້ນ.
13 ແລະ ບໍ່ມີຜູ້ອື່ນທີ່ຈະເຫັນມັນນອກ
ຈາກບໍ່ເທົ່າໃດຄົນຕາມພຣະປະສົງຂອງ
ພຣະເຈົ້າ, ເພື່ອສະແດງປະຈັກພະຍານ
ເຖິງພຣະຄຳຂອງພຣະອົງຕໍ່ລູກຫລານ
ມະນຸດ ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວ
ວ່າ ຂໍ້ຄວາມຂອງຄົນຊື່ສັດຈະເວົ້າຄືກັບວ່າ
ອອກມາ [ກ]ຈາກຄົນຕາຍ.
14 ດັ່ງນັ້ນ, ອົງພຣະຜູ້ເປັນເຈົ້າຈະເລີ່ມ
ນຳເອົາຂໍ້ຄວາມໃນໜັງສືອອກມາ; ແລະ
ດ້ວຍປາກຂອງພະຍານຫລາຍປາກເທົ່າທີ່
ພຣະອົງເຫັນວ່າດີ ພຣະອົງຈະສະຖາປະນາ
ພຣະຄຳຂອງພຣະອົງໄວ້; ແລະ ວິບັດແກ່
ຄົນທີ່ [ກ]ປະຕິເສດພຣະຄຳຂອງພຣະເຈົ້າ!
15 ແຕ່ຈົ່ງເບິ່ງ, ເຫດການຈະບັງເກີດ
ຂຶ້ນຄື ອົງພຣະຜູ້ເປັນເຈົ້າຈະກ່າວກັບຜູ້ທີ່

6 ກ 2 ນຟ 26:16–17; 29:12.
ຄມພ ພຣະຄຳພີມໍມອນ.
ຂ ຈຣ 1:2;
ມມ 5:12–13.
7 ກ ອຊຢ 29:11–12;
ອທ 3:25–27; 4:4–7.
ຂ ມຊຢ 8:19.
ຄ ອທ 13:1–12.
8 ກ ອທ 5:1.
ຂ 3 ນຟ 26:9–12;
ອທ 4:5–6.
9 ກ ຄພ 17:5–6.
ຂ ຈສ—ປ 1:64–65.
11 ກ ລກ 12:3;
ມມ 5:8;
ຄພ 121:26–31.
12 ກ ພບຍ 19:15.
ຂ 2 ນຟ 11:3;
ອທ 5:2–4;
ຄພ 5:11, 15; 17:1.
13 ກ 2 ນຟ 3:19–20;
33:13–15;
ມຣນ 10:27.
14 ກ 2 ນຟ 28:29–30;
ອທ 4:8.

ພຣະອົງຈະມອບໜັງສືໃຫ້ວ່າ: ຈົ່ງນຳເອົາຂໍ້
ຄວາມນີ້ຊຶ່ງບໍ່ໄດ້ຖືກຜະນຶກໄວ້ ແລະ ມອບ
ໃຫ້ຄົນອີກຄົນໜຶ່ງ, ເພື່ອເຂົາຈະໄດ້ສະແດງ
ໃຫ້ຄົນທີ່ມີການສຶກສາເບິ່ງ ໂດຍກ່າວວ່າ:
ຂໍໃຫ້ທ່ານ [ກ]ອ່ານເລື່ອງນີ້ເບິ່ງດູ ແລະ ຄົນທີ່
ມີການສຶກສາຈະບອກວ່າ: ຈົ່ງນຳເອົາໜັງສື
ມາ ແລ້ວເຮົາຈະອ່ານມັນ.
16 ແລະ ບັດນີ້, ເພາະວ່າການຍ້ອງຍໍສັນ
ລະເສີນຂອງໂລກ ແລະ ເພື່ອຫາ [ກ]ຜົນປະ
ໂຫຍດ ເຂົາຈະກ່າວເຊັ່ນນີ້ ແລະ ບໍ່ແມ່ນ
ເພື່ອລັດສະໝີພາບຂອງພຣະເຈົ້າ.
17 ແລະ ຊາຍຜູ້ນັ້ນຈະກ່າວອີກວ່າ: ຂ້າ
ພະເຈົ້າຈະນຳເອົາໜັງສືມາບໍ່ໄດ້ເພາະມັນ
ຖືກຜະນຶກໄວ້ແລ້ວ.
18 ເມື່ອນັ້ນຄົນມີການສຶກສາຈະເວົ້າວ່າ:
ຂ້າພະເຈົ້າອ່ານມັນບໍ່ໄດ້.
19 ດັ່ງນັ້ນ ເຫດການຈະບັງເກີດຂຶ້ນຄື,
ອົງພຣະຜູ້ເປັນເຈົ້າຈະມອບໜັງສື ແລະ ຂໍ້
ຄວາມທີ່ມີຢູ່ໃນນັ້ນ ໃຫ້ຄົນທີ່ບໍ່ມີການສຶກ
ສາອີກ; ແລະ ຊາຍຄົນທີ່ບໍ່ມີການສຶກສາຈະ
ເວົ້າວ່າ: ຂ້າພະເຈົ້າບໍ່ມີການສຶກສາ.
20 ເມື່ອນັ້ນອົງພຣະຜູ້ເປັນເຈົ້າຈະກ່າວ
ກັບລາວວ່າ: ຄົນມີການສຶກສາຈະອ່ານມັນ
ບໍ່ໄດ້ ເພາະວ່າເຂົາປະຕິເສດມັນ, ແລະ
ເຮົາສາມາດທຳງານຂອງເຮົາໄດ້; ດັ່ງນັ້ນ
ເຈົ້າຈົ່ງອ່ານຂໍ້ຄວາມທີ່ເຮົາຈະໃຫ້ແກ່ເຈົ້າ.
21 [ກ]ຢ່າໄດ້ແຕະຕ້ອງເລື່ອງທີ່ຜະນຶກໄວ້
ເພາະເຮົາຈະນຳເອົາມັນອອກມາໃນເວລາ
ອັນເໝາະສົມຂອງເຮົາເອງ; ເພາະເຮົາຈະ
ສະແດງໃຫ້ລູກຫລານມະນຸດເຫັນວ່າ ເຮົາ
ສາມາດທຳງານຂອງເຮົາເອງໄດ້.
22 ດັ່ງນັ້ນ, ເມື່ອເຈົ້າອ່ານຂໍ້ຄວາມຂອງ
ເຮົາທີ່ສັ່ງເຈົ້າໄວ້ ແລະ ໄດ້ຮັບ [ກ]ພະຍານ
ຊຶ່ງເຮົາສັນຍາຈະໃຫ້ແກ່ເຈົ້າ, ເມື່ອນັ້ນເຈົ້າ
ຈົ່ງຜະນຶກໜັງສືໄວ້ອີກ, ແລະ ເຊື່ອງມັນໄວ້
ກັບເຮົາ ເພື່ອຈະໄດ້ຮັກສາຂໍ້ຄວາມ ຊຶ່ງເຈົ້າ
ຍັງບໍ່ທັນໄດ້ອ່ານຈົນວ່າຕາມປັນຍາຂອງ
ເຮົາເອງຈະເຫັນສົມຄວນທີ່ຈະເປີດເຜີຍ
ທຸກຢ່າງແກ່ລູກຫລານມະນຸດ.
23 ເພາະ ຈົ່ງ ເບິ່ງ, ເຮົາຄື ພຣະ ເຈົ້າ;
ແລະ ເຮົາຄືພຣະເຈົ້າແຫ່ງ [ກ]ສິ່ງມະຫັດ
ສະຈັນ; ແລະ ເຮົາຈະສະແດງແກ່ໂລກວ່າ
ເຮົາ [ຂ]ເໝືອນກັບເຊັ່ນມື້ວານນີ້, ມື້ນີ້, ແລະ
ຕະຫລອດການ ນອກຈາກຈະ [ຄ]ເປັນຕາມ
ສັດທາຂອງລູກຫລານມະນຸດ.
24 ແລະ ເຫດການຈະບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າຈະກ່າວກັບລາວ ຊຶ່ງຈະ
ອ່ານຂໍ້ຄວາມທີ່ຈະມອບໃຫ້ລາວວ່າ:
25 [ກ]ຕາບເທົ່າທີ່ຜູ້ຄົນພວກນີ້ເຂົ້າມາໃກ້
ເຮົາດ້ວຍປາກຂອງພວກເຂົາ, ແລະ [ຂ]ໃຫ້
ກຽດເຮົາດ້ວຍຮີມສົບຂອງພວກເຂົາ, ແຕ່
ໃຈຂອງພວກເຂົາຫ່າງໄກຈາກເຮົາ, ແລະ
ຄວາມຢ້ານກົວຂອງພວກເຂົາທີ່ມີຕໍ່ເຮົາຖືກ
ສິດສອນໂດຍ [ຄ]ກົດເກນຂອງມະນຸດ—
26 ສະນັ້ນ, ເຮົາຈະເລີ່ມເຮັດ [ກ]ສິ່ງອັດ
ສະຈັນກັບຜູ້ຄົນພວກນີ້ອີກ, ແທ້ຈິງແລ້ວ,
[ຂ]ງານແປກປະຫລາດ ແລະ ອັດສະຈັນ, ປັນ
ຍາຂອງຄົນທີ່ມີປັນຍາຂອງເຂົາຈະພິນາດ
ໄປ, ແລະ ຄວາມເຂົ້າໃຈຂອງຄົນທີ່ເຂົ້າໃຈ
ຈະຖືກປິດບັງໄວ້.

15 *ກ* ອຊຢ 29:11–12; ຈສ—ປ 1:65.
16 *ກ* ຄມພ ການຫລອກລວງຂອງປະໂລຫິດ.
21 *ກ* ອທ 5:1.
22 *ກ* ຄມພ ພະຍານຂອງພຣະຄຳພີມໍມອນ.
23 *ກ* ຄມພ ມະຫັດສະຈັນ, ການມະຫັດສະຈັນ.
*ຂ* ຮຣ 13:8.
*ຄ* ຮຣ 11; ອທ 12:7–22.
25 *ກ* ອຊຢ 29:13.
*ຂ* ມທ 15:8.
*ຄ* 2 ນຟ 28:31.
26 *ກ* 1 ນຟ 22:8; 2 ນຟ 29:1–2. ຄມພ ການຟື້ນຟູພຣະກິດຕິຄຸນ.
*ຂ* ອຊຢ 29:14; 2 ນຟ 25:17.

27 ແລະ [ກ]ວິບັດແກ່ຜູ້ທີ່ພະຍາຍາມຢ່າງ
ໜັກ ເພື່ອເຊື່ອງແຜນຂອງເຂົາໃຫ້ພົ້ນຈາກ
ພຣະຜູ້ເປັນເຈົ້າ! ແລະ ວຽກງານຂອງເຂົາຢູ່
ໃນຄວາມມືດ; ແລະ ເຂົາເວົ້າວ່າ: ຜູ້ໃດຈະ
ເຫັນເຮົາ ແລະ ຜູ້ໃດຈະຮູ້ຈັກເຮົາ? ແລະ
ເຂົາເວົ້າອີກວ່າ: ການປີ້ນເລື່ອງຂອງເຈົ້າ
ຈະຖືກຖືວ່າ ເປັນດິນດາກ [ຂ]ຂອງຊ່າງປັ້ນ
ໝໍ້ຢ່າງແນ່ນອນ. ແຕ່ຈົ່ງເບິ່ງ, ຈອມໂຍທາ
ໄດ້ກ່າວວ່າ, ເຮົາຈະສະແດງແກ່ພວກເຂົາ
ວ່າ ເຮົາຮູ້ຈັກການກະທຳຂອງພວກເຂົາທັງ
ໝົດ ເພາະສິ່ງຂອງຈະກ່າວເຖິງຄົນທີ່ເຮັດ
ມັນຂຶ້ນບໍວ່າ ເຂົາບໍ່ໄດ້ເຮັດມັນຂຶ້ນມາ? ຫລື
ສິ່ງທີ່ໃສ່ຂອບໄວ້ຈະກ່າວເຖິງຜູ້ທີ່ໃສ່ຂອບ
ມັນບໍວ່າ ມັນບໍ່ມີຄວາມເຂົ້າໃຈຫຍັງໝົດ?
28 ແຕ່ຈົ່ງເບິ່ງ, ຈອມໂຍທາໄດ້ກ່າວວ່າ:
ເຮົາຈະສະແດງໃຫ້ລູກຫລານມະນຸດເຫັນ
ວ່າ ຍັງອີກບໍ່ດົນ ເລບານອນຈະຖືກປ່ຽນ
ເປັນທົ່ງອັນອຸດົມສົມບູນ; ເພາະທົ່ງອັນອຸ
ດົມສົມບູນຈະເປັນປ່າໄມ້.
29 [ກ]ແລະ ໃນມື້ນັ້ນຄົນຫູໜວກຈະໄດ້
ຍິນຂໍ້ຄວາມຈາກໜັງສື ແລະ ຄົນຕາບອດ
ຈະຫລຽວເຫັນຈາກການປິດບັງ ແລະ ຈາກ
ຄວາມມືດ.
30 ແລະ [ກ]ຄົນ ອ່ອນ ໂຍນ ຈະ ເພີ່ມ ຂຶ້ນ
ແລະ [ຂ]ຄວາມສຸກຂອງພວກເຂົາຈະຢູ່ໃນ
ພຣະຜູ້ເປັນເຈົ້າ, ແລະ ຄົນທຸກຍາກໃນບັນ
ດາມະນຸດຈະປິຕິຍິນດີໃນພຣະຜູ້ບໍລິສຸດ
ຂອງອິດສະຣາເອນ.
31 ເພາະແນ່ນອນຄື ຕາບໃດທີ່ພຣະຜູ້
ເປັນເຈົ້າຊົງພຣະຊົນຢູ່ [ກ]ຄົນທີ່ໜ້າຢ້ານກົວ
ຈະສູນຫາຍໄປ ແລະ ຄົນມັກເຍາະເຍີ້ຍຈະ
ໝົດໄປ, ແລະ ຄົນທັງປວງທີ່ຫາໂອກາດ
ກະທຳຄວາມຊົ່ວຮ້າຍຈະຖືກຕັດອອກ;
32 [ກ]ຜູ້ທີ່ໃສ່ຄວາມຄົນອື່ນດ້ວຍຖ້ອຍຄຳ
ຂອງຕົນ, ແລະ ວາງບ້ວງໃນ [ຂ]ປະຕູເມືອງ
ໄວ້ດັກຜູ້ກ່າວຕຳນິ ແລະ [ຄ]ຫັນເອົາສິ່ງທີ່
ທ່ຽງທຳໄປເປັນສິ່ງທີ່ບໍ່ມີຄຸນຄ່າ.
33 ສະນັ້ນ, ພຣະຜູ້ເປັນເຈົ້າຜູ້ໄຖ່ອັບຣາ
ຮາມໄດ້ກ່າວກ່ຽວກັບເຊື້ອສາຍຂອງຢາໂຄບ
ດັ່ງນີ້: ບັດນີ້, ຢາໂຄບຈະບໍ່ຕ້ອງອັບອາຍອີກ,
ເພາະໜ້າຂອງພວກເຂົາຈະບໍ່ຊີດລົງ.
34 ເພາະເມື່ອພວກເຂົາ [ກ]ເຫັນລູກຫລານ
ຂອງພວກເຂົາເປັນຜົນງານຈາກມືຂອງ
ເຮົາໃນທ່າມກາງພວກເຂົາແລ້ວ, ພວກ
ເຂົາຈະເຮັດໃຫ້ພຣະນາມຂອງເຮົາສັກສິດ
ແລະ ເຮັດໃຫ້ພຣະຜູ້ບໍລິສຸດຂອງຢາໂຄບ
ສັກສິດ, ແລະ ຈະຢຳເກງພຣະເຈົ້າຂອງ
ອິດສະຣາເອນ.
35 ພວກທີ່ [ກ]ເຮັດຜິດທາງວິນຍານຈະມາ
ເຖິງຄວາມເຂົ້າໃຈ ແລະ ບັນດາຜູ້ທີ່ຈົ່ມພຶມ
ພຳຈະໄດ້ [ຂ]ຮຽນຮູ້ຄຳສອນ.

## ບົດທີ 28

*ສາດສະໜາຈັກທີ່ບໍ່ຖືກຕ້ອງຈະຖືກສະຖາ
ປະນາຂຶ້ນໃນຍຸກສຸດທ້າຍ—ພວກເຂົາຈະ
ສິດສອນຄຳສອນທີ່ຜິດ, ບໍ່ມີປະໂຫຍດ,
ແລະ ໂງ່ຈ້າ—ຈະມີການປະຖິ້ມຄວາມ
ເຊື່ອຢູ່ທົ່ວໄປຍ້ອນຜູ້ສອນປອມ—ມານຈະ
ເຮັດໃຫ້ໃຈຂອງຄົນໂຫດຮ້າຍ—ມັນຈະສິດ
ສອນຄຳສອນທີ່ຜິດໃນທຸກວິທີທາງ. ປະ
ມານ 559–545 ປີ ກ່ອນ ຄ.ສ.*

27 *ກ* ອຊຢ 29:15.
*ຂ* ຢມຢ 18:6.
29 *ກ* ອຊຢ 29:18.
30 *ກ* ຄມພ ອ່ອນໂຍນ,
ຄວາມອ່ອນໂຍນ.
*ຂ* ຄພ 101:36.
31 *ກ* ອຊຢ 29:20.
32 *ກ* ລກ 11:54.
*ຂ* ອມ 5:10.
*ຄ* 2 ນຟ 28:16.
34 *ກ* ອຊຢ 29:23–24.
35 *ກ* 2 ນຟ 28:14;
ຄພ 33:4.
*ຂ* ດນອ 12:4.

1 ແລະ ບັດນີ້, ຈົ່ງເບິ່ງພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າເວົ້າກັບພວກທ່ານແລ້ວຕາມທີ່ພຣະວິນຍານບັນຊາຂ້າພະເຈົ້າ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຮູ້ວ່າມັນຕ້ອງເກີດຂຶ້ນຢ່າງແນ່ນອນ.

2 ແລະ ເລື່ອງຂອງມັນຈະຖືກບັນທຶກອອກຈາກ [ກ]ໜັງສື ຊຶ່ງ [ຂ]ມີຄຸນຄ່າ ຢ່າງໃຫຍ່ຫລວງຕໍ່ລູກຫລານມະນຸດ, ແລະ ໂດຍສະເພາະກັບລູກຫລານຂອງພວກເຮົາ, ຊຶ່ງເປັນສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນ.

3 ເພາະເຫດການຈະບັງເກີດຂຶ້ນໃນມື້ນັ້ນຄື [ກ]ສາດສະໜາຈັກທີ່ຖືກສ້າງຂຶ້ນຈະບໍ່ແມ່ນເພື່ອພຣະຜູ້ເປັນເຈົ້າ, ແຕ່ລະແຫ່ງຈະກ່າວຕໍ່ຕ້ານຊຶ່ງກັນແລະກັນວ່າ: ຈົ່ງເບິ່ງຂ້າພະເຈົ້າ, ຂ້າພະເຈົ້າເປັນຂອງພຣະຜູ້ເປັນເຈົ້າ ແລະ ແຫ່ງອື່ນໆຈະເວົ້າວ່າ: ຂ້າພະເຈົ້າເປັນຂອງພຣະຜູ້ເປັນເຈົ້າ; ແລະ ທຸກຄົນທີ່ສ້າງສາດສະໜາຈັກຂຶ້ນທີ່ບໍ່ແມ່ນເພື່ອພຣະຜູ້ເປັນເຈົ້າຈະເວົ້າດັ່ງນັ້ນ—

4 ແລະ ພວກເຂົາຈະຂັດແຍ້ງກັນ; ແລະ ປະໂລຫິດຂອງພວກເຂົາຈະຂັດແຍ້ງກັນ, ແລະ ພວກເຂົາຈະສິດສອນດ້ວຍ [ກ]ການຮຽນຮູ້ຂອງພວກເຂົາ, ແລະ ປະຕິເສດພຣະວິນຍານບໍລິສຸດທີ່ປະທານການເວົ້າອອກມາ.

5 ແລະ ພວກເຂົາຈະ [ກ]ປະຕິເສດ [ຂ]ອຳນາດຂອງພຣະເຈົ້າ, ພຣະຜູ້ບໍລິສຸດຂອງອິດສະຣາເອນ ແລະ ພວກເຂົາເວົ້າກັບຜູ້ຄົນວ່າ: ຈົ່ງເຊື່ອຟັງພວກເຮົາ, ແລະ ພວກທ່ານຈົ່ງຟັງກົດເກນຂອງພວກເຮົາ; ເພາະຈົ່ງເບິ່ງ, ທຸກມື້ນີ້ [ຄ]ບໍ່ມີພຣະເຈົ້າ, ເພາະວ່າພຣະຜູ້ເປັນເຈົ້າ ແລະ ພຣະຜູ້ໄຖ່ໄດ້ທຳງານຂອງພຣະອົງແລ້ວ, ແລະ ພຣະອົງໄດ້ປະທານອຳນາດຂອງພຣະອົງໃຫ້ມະນຸດ;

6 ຈົ່ງເບິ່ງ, ພວກທ່ານຈົ່ງເຊື່ອຟັງກົດເກນຂອງຂ້າພະເຈົ້າ; ຖ້າຫາກຜູ້ໃດຈະກ່າວວ່າມີສິ່ງມະຫັດສະຈັນກະທຳ ໂດຍພຣະຫັດຂອງພຣະຜູ້ເປັນເຈົ້າແລ້ວ, ຢ່າເຊື່ອເຂົາ; ເພາະທຸກມື້ນີ້ພຣະອົງບໍ່ແມ່ນພຣະເຈົ້າແຫ່ງ [ກ]ສິ່ງມະຫັດສະຈັນ; ພຣະອົງໄດ້ທຳງານຂອງພຣະອົງແລ້ວ.

7 ແທ້ຈິງແລ້ວ, ຈະມີຄົນເປັນຈຳນວນຫລວງຫລາຍທີ່ຈະເວົ້າວ່າ: ຈົ່ງ [ກ]ກິນ, ຈົ່ງດື່ມ, ແລະ ຈົ່ງມ່ວນຊື່ນເຖີດ, ເພາະວ່າມື້ອື່ນນີ້ພວກເຮົາກໍຈະຕາຍແລ້ວ; ແລະ ມັນຈະດີສຳລັບພວກເຮົາ.

8 ແລະ ຈະມີຄົນເປັນຈຳນວນຫລວງຫລາຍທີ່ຈະເວົ້າອີກວ່າ: ຈົ່ງກິນ, ຈົ່ງດື່ມ, ຈົ່ງມ່ວນຊື່ນເຖີດ; ເຖິງຢ່າງໃດກໍຕາມ, ຈົ່ງຢ້ານກົວພຣະເຈົ້າ—ພຣະອົງ [ກ]ຈະຍອມແກ່ການກະທຳບາບເລັກໜ້ອຍ; ແທ້ຈິງແລ້ວ, ຈົ່ງ [ຂ]ຕົວະໜ້ອຍໜຶ່ງ, ຈົ່ງເອົາປຽບຜູ້ອື່ນເພາະຄຳເວົ້າຂອງເຂົາ, ຈົ່ງຂຸດ [ຄ]ຂຸມດັກເພື່ອນບ້ານ; ບໍ່ມີອັນຕະລາຍແນວໃດໃນການເຮັດສິ່ງນີ້, ແລະ ຈົ່ງເຮັດສິ່ງທັງໝົດນີ້, ເພາະມື້ອື່ນພວກເຮົາກໍຈະຕາຍແລ້ວ, ແລະ ຖ້າຫາກຈະເປັນໄປວ່າພວກເຮົາຜິດ, ພຣະເຈົ້າຈະຕີສອນພວກເຮົາສອງສາມເທື່ອ

---

**28** 2 *ກ* ຄມພ ພຣະຄຳພີມໍມອນ.
*ຂ* 1 ນຟ 13:34–42; 22:9; 3 ນຟ 21:6.
3 *ກ* 1 ກຣທ 1:10–13; 1 ນຟ 22:23; 4 ນຟ 1:25–29; ມມ 8:28, 32–38.
4 *ກ* 2 ນຟ 9:28.
5 *ກ* 2 ນຟ 26:20.
*ຂ* 2 ຕມທ 3:5.
*ຄ* ແອວ 30:28.
6 *ກ* ມມ 8:26; 9:15–26.
7 *ກ* 1 ກຣທ 15:32; ແອວ 30:17–18.
8 *ກ* ມມ 8:31.
*ຂ* ຄພ 10:25; ມຊ 4:4. ຄມພ ຕົວະ.
*ຄ* ສພສ 26:27; 1 ນຟ 14:3.

ແລະ ພາຍຫລັງມາ, ພວກເຮົາກໍຈະລອດຢູ່
ໃນອານາຈັກຂອງພຣະເຈົ້າ.
9 ແທ້ ຈິງ ແລ້ວ, ຈະ ມີ ຄົນ ເປັນ ຈຳນວນ
ຫລວງຫລາຍ ທີ່ ຈະ ສິດສອນ ຕາມ ວິທີ ນີ້,
ᵃຄຳ ສອນ ᵇທີ່ ຜິດ ແລະ ບໍ່ ມີ ປະ ໂຫຍດ
ແລະ ໂງ່ຈ້າ ແລະ ອວດອົ່ງຢູ່ໃນໃຈຂອງ
ພວກເຂົາ, ແລະ ຈະພະຍາຍາມຢ່າງໜັກ
ເພື່ອເຊື່ອງແຜນຂອງພວກເຂົາໃຫ້ພົ້ນຈາກ
ພຣະຜູ້ເປັນເຈົ້າ; ແລະ ວຽກງານຂອງພວກ
ເຂົາຈະຢູ່ໃນຄວາມມືດ.
10 ແລະ ᵃເລືອດຂອງໄພ່ພົນຂອງພຣະ
ເຈົ້າຈະຮ້ອງຈາກພື້ນດິນເພື່ອຕໍ່ຕ້ານພວກ
ເຂົາ.
11 ແທ້ຈິງແລ້ວ, ພວກເຂົາທັງໝົດອອກ
ໄປຈາກ ᵃທາງແລ້ວ; ພວກເຂົາກັບ ᵇເນົ່າ
ເປື່ອຍ.
12 ຍ້ອນ ວ່າ ᵃຄວາມ ທະນົງ ໃຈ, ແລະ
ຍ້ອນ ວ່າຜູ້ສອນປອມ ແລະ ຄຳສອນຜິດ,
ສາດສະໜາຈັກຂອງພວກເຂົາຈຶ່ງກັບທຸຈະ
ລິດ, ແລະ ສາດສະໜາຈັກຂອງພວກເຂົາ
ອວດອ້າງ; ຍ້ອນຄວາມທະນົງໃຈ ພວກ
ເຂົາຈຶ່ງອວດອົ່ງ.
13 ພວກເຂົາ ᵃປຸ້ນ ᵇຄົນຍາກຈົນເພາະ
ບ່ອນລີ້ໄພອັນສວຍງາມ; ພວກເຂົາປຸ້ນສະ
ດົມຄົນຍາກຈົນເພາະເສື້ອຜ້າອັນສວຍງາມ
ຂອງພວກເຂົາ; ແລະ ພວກເຂົາຂົ່ມເຫັງຄົນ
ອ່ອນໂຍນ ແລະ ຄົນຕ່ຳຕ້ອຍໃນໃຈ, ຍ້ອນ
ພວກເຂົາ ᶜທະນົງໃຈຂອງພວກເຂົາ, ພວກ
ເຂົາຈຶ່ງອວດອົ່ງ.
14 ພວກເຂົາ ᵃແຂງຄໍ ແລະ ຫລຽວໜ້າ
ຂຶ້ນ; ແທ້ຈິງແລ້ວ, ແລະ ເພາະຄວາມທະນົງ
ໃຈ ແລະ ຄວາມຊົ່ວຮ້າຍ, ແລະ ຄວາມໜ້າ
ກຽດຊັງ ແລະ ການໂສເພນີ, ພວກເຂົາຈຶ່ງ
ᵇຫລົງທາງໄປໝົດນອກຈາກບໍ່ເທົ່າໃດຄົນ,
ຊຶ່ງເປັນຜູ້ຕິດຕາມທີ່ຖ່ອມຕົວຂອງພຣະ
ຄຣິດ; ເຖິງຢ່າງໃດກໍຕາມ, ພວກເຂົາຍັງ
ຖືກພາໄປຈົນເຮັດຜິດຫລາຍເທື່ອຍ້ອນວ່າ
ພວກເຂົາຖືກສິດສອນດ້ວຍກົດເກນຂອງ
ມະນຸດ.
15 ໂອ້ ຄົນ ᵃສະຫລາດ, ແລະ ຄົນມີການ
ສຶກສາ, ແລະ ຄົນຮັ່ງມີທີ່ອວດອົ່ງ, ຍ້ອນ
ᵇຄວາມທະນົງໃຈຂອງພວກເຂົາ, ແລະ ຄົນ
ທັງຫລາຍທີ່ສັ່ງສອນຄຳສອນຜິດ, ແລະ
ຄົນທັງຫລາຍທີ່ທຳການໂສເພນີ, ແລະ
ບິດເບືອນທາງທີ່ຖືກຕ້ອງຂອງພຣະຜູ້ເປັນ
ເຈົ້າ, ᶜວິບັດ, ວິບັດ, ວິບັດແກ່ພວກນັ້ນ, ອົງ
ພຣະຜູ້ເປັນເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່
ໄດ້ກ່າວໄວ້, ເພາະພວກເຂົາຈະຖືກຊຸກລົງ
ນະລົກ!
16 ວິບັດແກ່ພວກເຂົາທີ່ ᵃຫັນສິ່ງທີ່ທ່ຽງ
ທຳໄປເພື່ອສິ່ງທີ່ບໍ່ມີຄຸນຄ່າ ແລະ ໝິ່ນປະ
ໝາດສິ່ງທີ່ດີ ແລະ ກ່າວວ່າ ສິ່ງນັ້ນເປັນສິ່ງ
ທີ່ບໍ່ມີຄຸນຄ່າ! ເພາະມື້ນັ້ນຈະມາເຖິງ ເມື່ອ
ອົງພຣະຜູ້ເປັນເຈົ້າຈະສະເດັດມາຢ້ຽມຢາມ
ຜູ້ອາໄສຂອງແຜ່ນດິນໂລກຢ່າງວ່ອງໄວ;
ແລະ ໃນມື້ນັ້ນ ເມື່ອພວກເຂົາສຸກ ᵇເຕັມ
ທີ່ໃນຄວາມຊົ່ວຮ້າຍແລ້ວ ພວກເຂົາກໍຈະ
ຕາຍ.

9 *ກ* ມທ 15:9.
*ຂ* ອຊກ 13:3;
ຣລມ 13:29.
10 *ກ* ພນມ 6:9–11;
2 ນຟ 26:3;
ມມ 8:27;
ອທ 8:22–24;
ຄພ 87:7.
11 *ກ* ຣລມ 6:31.
*ຂ* ມມ 8:28–41;
ຄພ 33:4.
12 *ກ* ສພສ 28:25.
13 *ກ* ອຊກ 34:8.
*ຂ* ຣລມ 4:12.
*ຄ* ແອວ 5:53.
14 *ກ* ສພສ 21:4.
*ຂ* ອຊຢ 53:6.
15 *ກ* ສພສ 3:5–7.
*ຂ* ຄມພ ຈອງຫອງ,
ຄວາມຈອງຫອງ.
*ຄ* 3 ນຟ 29:5.
16 *ກ* ອຊຢ 29:21.
*ຂ* ອທ 2:9–10.

17 ແຕ່ ຈົ່ງ ເບິ່ງ, ຖ້າ ຫາກ ຜູ້ ອາ ໄສ ຂອງ ແຜ່ນ ດິນ ໂລກ ຈະ ກັບ ໃຈ ຈາກ ຄວາມ ຊົ່ວ ຮ້າຍ ແລະ ຄວາມ ໜ້າ ກຽດ ຊັງ ຂອງ ຕົນ ພວກເຂົາຈະບໍ່ຖືກທຳລາຍ, ຈອມໂຍທາໄດ້ ກ່າວ.

18 ແຕ່ ຈົ່ງ ເບິ່ງ, ສາດ ສະ ໜາ ຈັກ ໃຫຍ່ ແລະ ໜ້າກຽດຊັງນັ້ນແມ່ນ [ກ]ໂສເພນີຂອງ ແຜ່ນດິນໂລກທັງໝົດ, ຕ້ອງ [ຂ]ພັງທະລາຍ ລົງສູ່ແຜ່ນດິນ ແລະ ການຕົກຂອງມັນຕ້ອງ ໃຫຍ່ຫລວງ.

19 ເພາະ ວ່າ ອາ ນາ ຈັກ ຂອງ ມານ ຕ້ອງ [ກ]ສັ່ນ ສະເທືອນ ແລະ ຄົນທີ່ ເປັນຂອງມັນ ຈຶ່ງ ຈຳ ຕ້ອງ ຖືກກະຕຸ້ນ ໃຫ້ໄປສູ່ ການ ກັບ ໃຈ, ຖ້າບໍ່ ດັ່ງນັ້ນ [ຂ]ມານ ຈະ ຈັບ ພວກເຂົາ ໄວ້ດ້ວຍ [ຄ]ໂສ້ອັນເປັນນິດຂອງມັນ, ແລະ ພວກເຂົາຈະຖືກຍຸຍົງໃຫ້ຮ້າຍກາດ ແລະ ຕາຍໄປ;

20 ເພາະຈົ່ງເບິ່ງ, ໃນມື້ນັ້ນມານຈະ [ກ]ແຜ່ ເຂົ້າໄປໃນໃຈຂອງລູກຫລານມະນຸດ, ແລະ ຍຸຍົງພວກເຂົາໃຫ້ຄຽດແຄ້ນໃຫ້ສິ່ງທີ່ດີ.

21 ແລະ ມານ ຈະ ເຮັດ ໃຫ້ ຄົນ ອື່ນໆ [ກ]ສະຫງົບ ແລະ ກ່ອມພວກນັ້ນໄປ ໃນ ຄວາມໝັ້ນຄົງທີ່ເຕັມໄປດ້ວຍການມະລົມ ຈົນວ່າພວກນັ້ນຈະເວົ້າວ່າ: ທຸກຢ່າງດີໃນ ຊີໂອນ; ແທ້ຈິງແລ້ວ, ຊີໂອນຮຸ່ງເຮືອງໃນ ທຸກດ້ານ—ແລະ [ຂ]ມານກ່ອມຈິດວິນຍານ ຂອງພວກເຂົາດັ່ງນີ້, ແລະ ພາພວກເຂົາລົງ ໄປຫານະລົກຢ່າງລະມັດລະວັງ.

22 ແລະ ຈົ່ງ ເບິ່ງ, ມານຍົກຍໍຄົນອື່ນໆ ໄປ, ແລະ ບອກວ່າບໍ່ມີ [ກ]ນະລົກ; ແລະ ມານ ກ່າວກັບພວກນີ້ວ່າ: ເຮົາບໍ່ແມ່ນມານ ເພາະ ວ່າບໍ່ມີມານເລີຍ—ແລະ ມັນຈະສີ່ມໃສ່ໃນ ຫູຂອງພວກນີ້ເຊັ່ນນັ້ນ, ຈົນວ່າມັນຈັບພວກ ນີ້ໄວ້ ດ້ວຍ [ຂ]ໂສ້ອັນເປັນຕາຢ້ານຂອງມັນ, ຊຶ່ງຈາກນັ້ນຍ່ອມບໍ່ມີການປົດປ່ອຍ.

23 ແທ້ ຈິງ ແລ້ວ, ພວກເຂົາຈະຖືກຈັບ ໄວ້ດ້ວຍຄວາມຕາຍ ແລະ ນະລົກ; ແລະ ຄວາມຕາຍ, ແລະ ນະລົກ, ແລະ ມານ, ແລະ ທຸກຢ່າງທີ່ຖືກຍຶດໄວ້ນັ້ນຕ້ອງຢືນຢູ່ ຕໍ່ໜ້າພຣະທີ່ນັ່ງຂອງພຣະເຈົ້າ, ແລະ ຮັບ [ກ]ການພິພາກສາຕາມວຽກງານຂອງພວກ ເຂົາ, ຊຶ່ງຫລັງຈາກນັ້ນພວກເຂົາຕ້ອງໄປ ຫາບ່ອນທີ່ຕຽມໄວ້ໃຫ້ພວກເຂົາ, ເຖິງແມ່ນ ໄປສູ່ [ຂ]ທະເລໄຟ ແລະ ມາດ, ຊຶ່ງເປັນ ຄວາມທໍລະມານທີ່ບໍ່ມີວັນສິ້ນສຸດ.

24 ສະນັ້ນ ວິບັດ ແກ່ຜູ້ຊຶ່ງຢູ່ຢ່າງບໍ່ທຸກ ຮ້ອນໃນຊີໂອນ!

25 ວິບັດ ແກ່ຜູ້ທີ່ຮ້ອງອອກມາວ່າ: ທຸກ ຢ່າງດີ!

26 ແທ້ ຈິງ ແລ້ວ, ວິບັດ ແກ່ ຜູ້ ທີ່ [ກ]ເຊື່ອ ຟັງ ກົດ ເກນຂອງມະນຸດ ແລະ ປະຕິເສດ ອຳນາດຂອງພຣະເຈົ້າ, ແລະ ຂອງປະທານ ແຫ່ງພຣະວິນຍານບໍລິສຸດ!

27 ແທ້ ຈິງ ແລ້ວ, ວິບັດແກ່ຜູ້ທີ່ກ່າວວ່າ: ເຮົາໄດ້ຮັບແລ້ວ ແລະ ບໍ່ [ກ]ຕ້ອງການອີກ!

28 ແລະ ໂດຍ ສະຫລຸບ, ວິບັດແກ່ຄົນ ທັງຫລາຍທີ່ຕົວສັ່ນ ແລະ [ກ]ໃຈຮ້າຍຍ້ອນ ວ່າຄວາມຈິງຂອງພຣະເຈົ້າ! ເພາະຈົ່ງເບິ່ງ, ຄົນທີ່ຖືກສ້າງຂຶ້ນເທິງ [ຂ]ດານຫີນຍ່ອມຮັບ ມັນດ້ວຍຄວາມດີ; ແລະ ຄົນທີ່ຖືກສ້າງຂຶ້ນ

18 ກ ພນມ 19:2.
ຂ 1 ນຟ 14:3, 17.
19 ກ 1 ນຟ 22:23.
ຂ ແອວ 34:35.
ຄ ແອວ 12:11.
20 ກ ຄພ 10:20–27.
21 ກ ມມ 8:31.
ຂ 2 ນຟ 9:39.
22 ກ ຄມພ ນະລົກ.
ຂ ແອວ 36:18.
23 ກ ຄມພ ພຣະເຢຊູຄຣິດ—ພິພາກສາ; ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
ຂ 2 ນຟ 9:16, 19, 26.
26 ກ 2 ນຟ 9:29.
27 ກ ແອວ 12:10–11.
28 ກ 2 ນຟ 9:40; 33:5. ຄມພ ກະບົດ, ການກະບົດ.
ຂ ມທ 7:24–27. ຄມພ ຫີນ.

ໃນຮາກຖານທີ່ເປັນດິນຊາຍ ຍ່ອມຕົວສັ່ນ
ຢ້ານວ່າຕົນຈະຕົກ.
29 ວິບັດ ແກ່ ຜູ້ ທີ່ ກ່າວ ວ່າ: ເຮົາ ໄດ້ ຮັບ
ພຣະ ຄຳຂອງພຣະ ເຈົ້າແລ້ວ, ແລະ ເຮົາ
[ກ]ບໍ່ຕ້ອງການພຣະຄຳຂອງພຣະເຈົ້າ [ຂ]ອີກ,
ເພາະວ່າເຮົາມີພໍແລ້ວ!
30 ເພາະຈົ່ງເບິ່ງ, ອົງພຣະຜູ້ເປັນເຈົ້າໄດ້
ກ່າວດັ່ງນີ້: ເຮົາຈະໃຫ້ແກ່ລູກຫລານມະນຸດ
ເປັນບັນທັດ, ເປັນ [ກ]ຂໍ້ເລັກໆໜ້ອຍໆ, ນີ້
ໜ້ອຍໜຶ່ງ ແລະ ນັ້ນໜ້ອຍໜຶ່ງ; ແລະ ຜູ້ທີ່
ເຊື່ອຟັງກົດເກນຂອງເຮົາ ແລະ ງ່ຽງຫູຟັງ
ຄຳແນະນຳຂອງເຮົາ ຍ່ອມເປັນສຸກ, ເພາະ
ວ່າເຂົາຈະຮຽນຮູ້ເຖິງ [ຂ]ປັນຍາ; ເມື່ອເຂົາ
[ຄ]ຮັບໄວ້ ເຮົາຈະໃຫ້ເຂົາ [ງ]ອີກ; ແລະ ສຳລັບ
ຜູ້ທີ່ຈະກ່າວວ່າ ເຮົາມີພໍແລ້ວ, ມັນຈະຖືກ
ເອົາໄປຈາກເຂົາເຖິງແມ່ນສິ່ງທີ່ເຂົາມີຢູ່ກໍ
ຈະຖືກເອົາໄປ.
31 ຜູ້ທີ່ [ກ]ໄວ້ເນື້ອເຊື່ອໃຈໃນມະນຸດ ຫລື
ເຮັດໃຫ້ເນື້ອໜັງເປັນແຂນຂອງເຂົາ, ຫລື
ຈະເຊື່ອຟັງກົດເກນຂອງມະນຸດ, ຍ່ອມຖືກ
ສາບແຊ່ງ, ນອກຈາກຈະມີກົດເກນໃຫ້ເຂົາ
ໂດຍອຳນາດຂອງພຣະວິນຍານບໍລິສຸດ.
32 ອົງພຣະຜູ້ເປັນ ເຈົ້າຈອມ ໂຍທາ ໄດ້
ກ່າວໄວ້ວ່າ, [ກ]ວິບັດແກ່ຄົນຕ່າງຊາດ! ເພາະ
ວ່າ ເຖິງ ແມ່ນ ເຮົາ ຈະ ຍື່ນ ແຂນ ຂອງ ເຮົາ
ອອກໄປໃຫ້ພວກເຂົາທຸກໆວັນ, ພວກເຂົາ
ຍັງປະຕິເສດເຮົາ; ອົງພຣະຜູ້ເປັນເຈົ້າໄດ້
ກ່າວ, ເຖິງຢ່າງໃດກໍຕາມ, ເຮົາກໍຈະເມດ
ຕາພວກເຂົາຖ້າຫາກພວກເຂົາຈະກັບໃຈ
ແລະ ມາຫາເຮົາ; ເພາະວ່າ [ຂ]ແຂນຂອງເຮົາ
ຍື່ນອອກໄປຕະຫລອດທັງວັນ, ອົງພຣະຜູ້
ເປັນເຈົ້າ, ຈອມໂຍທາໄດ້ກ່າວ.

## ບົດທີ 29

*ຄົນຕ່າງຊາດຢ່າງຫລວງຫລາຍຈະປະຕິເສດພຣະຄຳພີມໍມອນ—ພວກເຂົາຈະເວົ້າວ່າ, ພວກເຮົາບໍ່ຕ້ອງການພຣະຄຣິສຕະທຳຄຳພີເຫລັ້ມອື່ນອີກ—ພຣະຜູ້ເປັນເຈົ້າໄດ້ກ່າວກັບຫລາຍປະຊາຊາດ—ພຣະອົງຈະພິພາກສາໂລກມະນຸດຕາມສິ່ງທີ່ຈະມີຂຽນໄວ້ໃນປຶ້ມ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແຕ່ ຈົ່ງ ເບິ່ງ ໃນ ມື້ ນັ້ນ ຈະ ມີ ຄົນ ເປັນ
ຈຳ ນ ວ ນ ຫລວງ ຫລາຍ—ເວລາ ເຮົາ ຈ ະ
ເລີ່ມທຳ [ກ]ງານອັດສະຈັນໃນບັນດາພວກ
ເຂົາ, ເພື່ອເຮົາຈະຄິດເຖິງ [ຂ]ພັນທະສັນຍາ
ຂອງເຮົາ ຊຶ່ງເຮັດໄວ້ກັບລູກຫລານມະນຸດ,
ເພື່ອເຮົາຈະລົງມືອີກເປັນຄັ້ງ [ຄ]ທີສອງທີ່ຈະ
ນຳຜູ້ຄົນຂອງເຮົາ ຊຶ່ງເປັນເຊື້ອສາຍອິດສະ
ຣາເອນກັບຄືນມາ;
2 ແລະ ເພື່ອເຮົາຈະລະນຶກເຖິງສັນຍາ
ທີ່ເຮົາໄດ້ເຮັດໄວ້ກັບເຈົ້ານີໄຟ ແລະ ກັບ
ບິດາຂອງເຈົ້າອີກວ່າ ເຮົາຈະລະນຶກເຖິງ
ລູກຫລານຂອງເຈົ້າ ແລະ ວ່າ [ກ]ຄຳເວົ້າ
ຂອງລູກຫລານຂອງເຈົ້າຈະອອກຈາກ
ປາກຂອງເຮົາໄປຫາລູກຫລານຂອງເຈົ້າ;
ແລະ ຄຳເວົ້າຂອງເຮົາຈະ [ຂ]ຮຽກຮ້ອງອອກ

29 *ກ* 2 ນຟ 29:3–10.
*ຂ* 2 ນຟ 27:14; ອຫ 4:8.
30 *ກ* ອຊຢ 28:9–13; ຄພ 98:12.
*ຂ* ຄມພ ສະຕິປັນຍາ.
*ຄ* ລກ 8:18.
*ງ* ແອວ 12:10; ຄພ 50:24.
31 *ກ* ຄພ 1:19–20.
32 *ກ* 1 ນຟ 14:6.
*ຂ* ຢຄ 5:47; 6:4.
**29** 1 *ກ* 2 ນຟ 27:26. ຄມພ ການຟື້ນຟູພຣະກິດຕິຄຸນ.
*ຂ* ຄມພ ພັນທະສັນຍາຂອງອັບຣາຮາມ.
*ຄ* 2 ນຟ 6:14; 21:11–12; 25:17. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
2 *ກ* 2 ນຟ 3:18–21.
*ຂ* ອຊຢ 5:26; 2 ນຟ 15:26; ມຣນ 10:28.

ໄປຫາທີ່ສຸດຂອງແຜ່ນດິນໂລກ, ເພື່ອເປັນ
[ຄ]ຫລັກສັນຍານໃຫ້ແກ່ຜູ້ຄົນຂອງເຮົາ, ຊຶ່ງ
ເປັນເຊື້ອສາຍອິດສະຣາເອນ.
3 ເພາະຄຳເວົ້າຂອງເຮົາຈະສົ່ງສຽງອອກ
ໄປ—ຄົນຕ່າງຊາດສ່ວນຫລາຍຈະເວົ້າວ່າ:
[ກ]ພຣະຄຣິສຕະທຳຄຳພີ! ພຣະຄຣິສຕະທຳ
ຄຳພີ! ເຮົາມີພຣະຄຣິສຕະທຳຄຳພີຢູ່ແລ້ວ,
ແລະ ຈະມີພຣະຄຣິສຕະທຳຄຳພີເຫລັ້ມ
ອື່ນອີກບໍ່ໄດ້.
4 ແຕ່ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້:
ໂອ້ ຄົນໂງ່, ເຂົາຈະມີພຣະຄຣິສຕະທຳຄຳ
ພີ; ແລະ ມັນໄດ້ອອກມາຈາກ [ກ]ຊາວຢິວ,
ຜູ້ຄົນແຫ່ງພັນທະສັນຍາໃນສະໄໝບູຮານ
ຂອງເຮົາ. ແລະ ພວກເຂົາຕອບແທນບຸນ
ຄຸນຊາວຢິວຢ່າງໃດແດ່ສຳລັບ [ຂ]ພຣະຄຣິສ
ຕະທຳຄຳພີ ຊຶ່ງພວກເຂົາໄດ້ຮັບຈາກພວກ
ນັ້ນ? ແທ້ຈິງແລ້ວ, ຄົນຕ່າງຊາດໝາຍເຖິງ
ອັນໃດ? ພວກເຂົາໄດ້ນຶກເຖິງຄວາມຍາກ
ລຳບາກ ແລະ ການທຳງານ, ແລະ ການ
ເຈັບປວດຂອງຊາວຢິວ ແລະ ຄວາມພາກ
ພຽນຂອງພວກນັ້ນທີ່ມີຕໍ່ເຮົາໃນການນຳ
ຄວາມລອດມາສູ່ຄົນຕ່າງຊາດຫລືບໍ່?
5 ໂອ້ ເຈົ້າຄົນຕ່າງຊາດ, ເຈົ້າຄິດເຖິງ
ຊາວຢິວ, ຊຶ່ງເປັນຜູ້ຄົນແຫ່ງພັນທະສັນຍາ
ໃນສະໄໝບູຮານຂອງເຮົາຫລືບໍ່? ບໍ່ເຄີຍ
ເລີຍ; ແຕ່ເຈົ້າສາບແຊ່ງພວກເຂົາ, ແລະ
[ກ]ຊັງພວກເຂົາ, ແລະ ບໍ່ພະຍາຍາມນຳ
ພວກເຂົາກັບຄືນມາ. ແຕ່ຈົ່ງເບິ່ງ, ເຮົາຈະ
ເອົາສິ່ງເຫລົ່ານີ້ທັງໝົດກັບມາໃສ່ເທິງຫົວ
ຂອງເຈົ້າເອງ; ເພາະເຮົາພຣະຜູ້ເປັນເຈົ້າ ບໍ່
ລືມຜູ້ຄົນຂອງເຮົາເລີຍ.
6 ເຈົ້າຄົນໂງ່ທີ່ຈະເວົ້າວ່າ: [ກ]ພຣະຄຣິສ
ຕະທຳຄຳພີ, ເຮົາມີພຣະຄຣິສຕະທຳຄຳພີ
ຢູ່ແລ້ວ, ແລະ ເຮົາບໍ່ຕ້ອງການພຣະຄຣິສ
ຕະທຳຄຳພີເຫລັ້ມອື່ນອີກ. ເຈົ້າຈະໄດ້ຮັບ
ພຣະຄຣິສຕະທຳຄຳພີບໍ ນອກຈາກໂດຍ
ຊາວຢິວ?
7 ເຈົ້າບໍ່ຮູ້ບໍວ່າ ມີປະຊາຊາດຫລາຍກວ່າ
ໜຶ່ງຊາດ? ເຈົ້າບໍ່ຮູ້ບໍວ່າ ເຮົາພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ຜູ້ [ກ]ສ້າງ
ມະນຸດທັງປວງ, ແລະວ່າເຮົານຶກເຖິງຄົນທີ່
ຢູ່ໃນ [ຂ]ເກາະໃນທະເລ; ແລະ ວ່າເຮົາປົກ
ຄອງຢູ່ໃນຟ້າສະຫວັນເບື້ອງເທິງ; ແລະ
ໃນແຜ່ນດິນໂລກເບື້ອງລຸ່ມ; ແລະ ເຮົານຳ
ຄວາມເວົ້າຂອງເຮົາອອກມາຫາລູກຫລານ
ມະນຸດ, ແທ້ຈິງແລ້ວ, ແມ່ນສູ່ປະຊາຊາດ
ທັງໝົດຂອງແຜ່ນດິນໂລກ?
8 ດັ່ງນັ້ນ ເຈົ້າຈົ່ມວ່າ, ຍ້ອນວ່າເຈົ້າຈະ
ໄດ້ຮັບຄຳເວົ້າຂອງເຮົາຫລາຍຂຶ້ນບໍ? ເຈົ້າ
ບໍ່ຮູ້ບໍວ່າ ປະຈັກພະຍານຂອງ [ກ]ສອງປະ
ຊາຊາດເປັນ [ຂ]ພະຍານຕໍ່ເຈົ້າວ່າເຮົາຄື
ພຣະເຈົ້າ, ວ່າເຮົານຶກເຖິງປະຊາຊາດໜຶ່ງ
ເໝືອນກັນກັບອີກປະຊາຊາດໜຶ່ງ? ດັ່ງນັ້ນ,
ເຮົາເວົ້າຄຳດຽວກັບປະຊາຊາດໜຶ່ງຄືກັນ
ກັບເວົ້າກັບປະຊາຊາດອື່ນ. ແລະ ເມື່ອສອງ
[ຄ]ປະຊາຊາດຈະຮ່ວມກັນ ປະຈັກພະຍານ
ທັງສອງປະຊາຊາດຈະຮ່ວມກັນອີກ.
9 ແລະ ເຮົາກະທຳເຊັ່ນນີ້ ເພື່ອຈະໄດ້
ພິສູດຕໍ່ຄົນຢ່າງຫລວງຫລາຍວ່າ ເຮົາ
ເປັນ [ກ]ເໝືອນກັນເຊັ່ນມື້ວານນີ້, ມື້ນີ້, ແລະ

2 *ຄ* 1 ນຟ 21:22.
ຄມພ ປ້າຍສັນຍານ.
3 *ກ* 1 ນຟ 13:23–25.
ຄມພ ພຣະຄຣິສຕະທຳຄຳພີ; ພຣະຄຳພີມໍມອນ.
4 *ກ* ຄພ 3:16.
ຄມພ ຊາວຢິວ.
*ຂ* ຄມພ ຢູດາ (ລູກຊາຍຂອງຢາໂຄບ)—ກົ່ງງ່າຂອງຢູດາ.
5 *ກ* 3 ນຟ 29:8.
6 *ກ* 1 ນຟ 13:38.
7 *ກ* ຄມພ ສ້າງ, ການສ້າງ.
*ຂ* 1 ນຟ 22:4.
8 *ກ* ອຊກ 37:15–20; 1 ນຟ 13:38–41; 2 ນຟ 3:12.
*ຂ* ມທ 18:16.
ຄມພ ພະຍານ.
*ຄ* ຮສອ 1:11.
9 *ກ* ຮຣ 13:8.

ຕະຫລອດການ; ແລະ ວ່າເຮົາເວົ້າອອກໄປ
ຕາມຄວາມພໍໃຈຂອງເຮົາ. ແລະ ເພາະວ່າ
ເຮົາ ເວົ້າ ຂຄຳໜຶ່ງແລ້ວເຈົ້າບໍ່ຈຳເປັນຕ້ອງ
ຄິດວ່າເຮົາເວົ້າອີກຄຳໜຶ່ງບໍ່ໄດ້; ເພາະວຽກ
ງານຂອງເຮົາຍັງບໍ່ທັນຈົບ ແລະ ມັນຈະຍັງ
ບໍ່ຈົບ ຈົນ ເຖິງທີ່ສຸດ ຂອງມະນຸດ, ທັງ ຈາກ
ເວລານີ້ເປັນຕົ້ນໄປ ແລະ ຕະຫລອດການ.
10 ດັ່ງນັ້ນ, ເພາະ ເຈົ້າມີພຣະຄຣິສຕະ
ທຳຄຳພີແລ້ວ ແລະ ເຈົ້າກໍບໍ່ຈຳເປັນຕ້ອງ
ຄິດວ່າມັນມີ ກຄຳເວົ້າທັງໝົດຂອງເຮົາຢູ່ໃນ
ນັ້ນ; ທັງເຈົ້າບໍ່ຈຳເປັນຈະຕ້ອງຄິດວ່າ ເຮົາ
ບໍ່ໄດ້ສັ່ງໃຫ້ບັນທຶກຕື່ມອີກ.
11 ເພາະເຮົາສັ່ງມະນຸດ ກທັງປວງ, ທັງ
ໃນທາງຕາເວັນອອກ, ແລະ ທາງຕາເວັນ
ຕົກ, ທັງ ໃນ ທາງ ເໜືອ, ແລະ ທາງ ໃຕ້,
ແລະ ໃນເກາະໃນທະເລ, ວ່າພວກເຂົາຈະ
ຂບັນທຶກຄຳເວົ້າ ຊຶ່ງເຮົາເວົ້າກັບພວກເຂົາ;
ເພາະຈາກ ຄໜັງສື ຊຶ່ງຈະມີບັນທຶກໄວ້ນັ້ນ
ເຮົາຈະ ງພິພາກສາໂລກ, ພິພາກສາທຸກໆ
ຄົນຕາມວຽກງານຂອງພວກເຂົາ, ຕາມ
ເລື່ອງທີ່ໄດ້ບັນທຶກໄວ້.
12 ເພາະຈົ່ງເບິ່ງ, ເຮົາຈະເວົ້າກັບ ກຊາວ
ຢິວ ແລະ ພວກເຂົາຈະບັນທຶກມັນໄວ້;
ແລະ ເຮົາຈະເວົ້າກັບຊາວນີໄຟ ແລະ ພວກ
ເຂົາຈະ ຂບັນທຶກມັນໄວ້; ແລະ ເຮົາຈະເວົ້າ
ກັບເຜົ່າອື່ນໆຂອງເຊື້ອສາຍອິດສະຣາເອນ
ອີກ, ຊຶ່ງເຮົາໄດ້ນຳອອກໄປແລ້ວ ແລະ
ພວກເຂົາຈະບັນທຶກມັນໄວ້; ແລະ ເຮົາຈະ
ເວົ້າກັບປະຊາຊາດ ຄທັງໝົດຂອງແຜ່ນດິນ
ໂລກ ແລະ ເຂົາຈະບັນທຶກມັນໄວ້.
13 ແລະ ເຫດການ ຈະ ບັງເກີດຂຶ້ນຄື
ກຊາວຢິວຈະມີຄຳເວົ້າຂອງຊາວນີໄຟ,
ແລະ ຊາວນີໄຟຈະມີຄຳເວົ້າຂອງຊາວຢິວ;
ແລະ ຊາວນີໄຟກັບຊາວຢິວຈະມີຄຳເວົ້າ
ຂອງ ຂເຜົ່າອິດສະຣາເອນທີ່ສູນຫາຍໄປ;
ແລະ ເຜົ່າອິດສະຣາເອນທີ່ສູນຫາຍໄປຈະ
ມີຄຳເວົ້າຂອງຊາວນີໄຟກັບຊາວຢິວ.
14 ແລະ ເຫດການຈະບັງເກີດຂຶ້ນຄື ຜູ້
ຄົນຂອງເຮົາ ຊຶ່ງເປັນຄົນຂອງ ກເຊື້ອສາຍ
ອິດສະຣາເອນ ຈະຖືກເຕົ້າໂຮມກັບຄືນ
ບ້ານສູ່ແຜ່ນດິນແຫ່ງຊັບສົມບັດຂອງພວກ
ເຂົາ; ແລະ ຄຳເວົ້າຂອງເຮົາຈະຖືກເຕົ້າ
ໂຮມໄວ້ ຂເປັນຄຳດຽວກັນ. ແລະ ເຮົາຈະ
ສະແດງແກ່ຄົນທີ່ຕໍ່ສູ້ກັບຄຳເວົ້າຂອງເຮົາ,
ແລະ ກັບຜູ້ຄົນຂອງເຮົາຜູ້ເປັນ ຄເຊື້ອສາຍ
ອິດສະຣາເອນວ່າ ເຮົາຄືພຣະເຈົ້າ ແລະ
ວ່າເຮົາໃຫ້ ງພັນທະສັນຍາໄວ້ກັບອັບຣາ
ຣາມ ວ່າເຮົາຈະລະນຶກເຖິງ ຈລູກຫລານ
ຂອງລາວ ສຕະຫລອດໄປ.

## ບົດທີ 30

*ຄົນຕ່າງຊາດທີ່ປ່ຽນໃຈເຫລື້ອມໃສຈະຖືກ ນັບເຂົ້າຢູ່ກັບຜູ້ຄົນແຫ່ງພັນທະສັນຍາ—*

9 ຂ ຄມພ ເປີດເຜີຍ, ການເປີດເຜີຍ.
10 ກ ຄມພ ພຣະຄຳພີ— ພຣະຄຳພີທີ່ໄດ້ທຳ ນາຍໄວ້ຈະອອກມາ.
11 ກ ແອວ 29:8.
ຂ 2 ຕມທ 3:16.
ຄ ຄມພ ໜັງສືທະ ບຽນແຫ່ງຊີວິດ.
ງ 2 ນຟ 25:22; 33:11, 14–15. ຄມພ ພິພາກສາ, ການ ພິພາກສາຄັ້ງສຸດທ້າຍ.
12 ກ 1 ນຟ 13:23–29.
ຂ 1 ນຟ 13:38–42; 2 ນຟ 26:17.
ຄ 2 ນຟ 26:33.
13 ກ ມມ 5:12–14.
ຂ ຄມພ ອິດສະຣາເອນ— ສິບເຜົ່າທີ່ຫາຍໄປຂອງ ອິດສະຣາເອນ.
14 ກ ຍມຢ 3:17–18.
ຂ ອຊກ 37:16–17.
ຄ 1 ນຟ 22:8–9.
ງ ປຖກ 12:1–3; 1 ນຟ 17:40; 3 ນຟ 20:27; ອຮຣ 2:9. ຄມພ ພັນທະສັນຍາ ຂອງອັບຣາຮາມ.
ຈ ຄພ 132:30.
ສ ປຖກ 17:7.

*ຊາວ ເລມັນ ກັບ ຊາວ ຢິວ ເປັນ ຈຳນວນ ຫລວງຫລາຍຈະເຊື່ອຖືພຣະຄຳ ແລະ ຈະ ກັບ ກາຍ ເປັນ ຜູ້ ຄົນ ທີ່ ໜ້າ ຊົມ—ອິດສະ ຣາເອນຈະຖືກນຳກັບຄືນ ແລະ ຄົນຊົ່ວຈະ ຖືກທຳລາຍ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງ
ຂອງຂ້າພະເຈົ້າ, ຂ້າພະເຈົ້າ ຈະ ເວົ້າກັບ
ພວກທ່ານ; ເພາະວ່າ ຂ້າພະເຈົ້ານີໄຟຈະບໍ່
ຍອມໃຫ້ພວກທ່ານຄິດວ່າ ພວກທ່ານຊອບ
ທຳຫລາຍກວ່າ ຄົນຕ່າງ ຊາດ. ເພາະ ຈົ່ງ
ເບິ່ງ, ຖ້າຫາກພວກທ່ານບໍ່ຮັກສາພຣະບັນ
ຍັດຂອງພຣະເຈົ້າ ພວກທ່ານກໍຈະຕາຍຄື
ກັນໝົດ; ຍ້ອນວ່າຂໍ້ຄວາມທີ່ເວົ້າໄວ້ ພວກ
ທ່ານກໍຈຳຕ້ອງຄິດວ່າຄົນຕ່າງຊາດຖືກທຳ
ລາຍໃຫ້ສິ້ນໄປ.
2 ເພາະຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກ
ທ່ານວ່າ ຄົນຕ່າງຊາດຜູ້ໃດທີ່ຈະກັບໃຈ
ຍ່ອມເປັນຜູ້ຄົນແຫ່ງ [ກ]ພັນທະສັນຍາຂອງ
ພຣະຜູ້ເປັນເຈົ້າ; ແລະ [ຂ]ຊາວຢິວຜູ້ໃດທີ່
ຈະບໍ່ກັບໃຈຈະຖືກປະຖິ້ມ ເພາະວ່າພຣະ
ຜູ້ເປັນເຈົ້າບໍ່ມີພັນທະສັນຍາກັບຜູ້ໃດນອກ
ຈາກກັບຄົນທີ່ [ຄ]ກັບໃຈ ແລະ ເຊື່ອຖືໃນ
ພຣະບຸດຂອງພຣະອົງ ຜູ້ເປັນພຣະຜູ້ບໍລິ
ສຸດຂອງອິດສະຣາເອນ.
3 ແລະ ບັດນີ້, ຂ້າພະເຈົ້າຈະທຳນາຍ
ເພີ່ມເຕີມອີກກ່ຽວກັບຊາວຢິວກັບຄົນຕ່າງ
ຊາດ. ເພາະຫລັງຈາກໜັງສືທີ່ຂ້າພະເຈົ້າ
ເວົ້າເຖິງຈະປະກົດອອກມາ, ແລະ ຖືກບັນ
ທຶກໄວ້ໃຫ້ຄົນຕ່າງຊາດ, ແລະ ຖືກຜະນຶກ
ໄວ້ໃຫ້ພຣະຜູ້ເປັນເຈົ້າອີກ, ແລະ ກໍຈະມີ
ຄົນຈຳນວນຫລວງຫລາຍທີ່ຈະ [ກ]ເຊື່ອຖືຂໍ້
ຄວາມທີ່ຂຽນໄວ້; ແລະ [ຂ]ພວກເຂົາຈະນຳ
ເອົາມັນອອກໄປຫາພວກທີ່ເຫລືອຢູ່ຂອງ
ລູກຫລານຂອງພວກເຮົາ.
4 ແລະ ເວລານັ້ນຜູ້ທີ່ເຫລືອຢູ່ຂອງລູກ
ຫລານຂອງພວກເຮົາຈະໄດ້ຮູ້ຈັກກ່ຽວ
ກັບພວກເຮົາວ່າ ພວກເຮົາມາຈາກເຢຣູ
ຊາເລັມແບບໃດ, ແລະ ວ່າພວກເຂົາເປັນຜູ້
ສືບຕະກຸນຂອງຊາວຢິວ.
5 ແລະ ພຣະກິດຕິຄຸນຂອງພຣະເຢຊູ
ຄຣິດຈະຖືກປະກາດໃນບັນດາ [ກ]ພວກເຂົາ;
ດັ່ງນັ້ນ, [ຂ]ພວກເຂົາຈະຖືກນຳກັບມາຫາ
[ຄ]ຄວາມຮູ້ເລື່ອງບັນພະບຸລຸດຂອງພວກເຂົາ
ແລະ ຄວາມຮູ້ເລື່ອງພຣະເຢຊູຄຣິດອີກ, ຊຶ່ງ
ມີຢູ່ໃນບັນດາບັນພະບຸລຸດຂອງພວກເຂົາ.
6 ແລະ ເມື່ອນັ້ນ ພວກເຂົາຈະປິຕິຍິນດີ
ເພາະພວກເຂົາຈະຮູ້ຈັກວ່າ ມັນເປັນພອນ
ໃຫ້ພວກເຂົາຈາກພຣະຫັດຂອງພຣະເຈົ້າ;
ແລະ ສະເກັດແຫ່ງຄວາມມືດຂອງພວກ
ເຂົາຈະເລີ່ມຕົກຈາກຕາຂອງພວກເຂົາ;
ແລະ ບໍ່ເທົ່າໃດລຸ້ນຄົນຈະຜ່ານໄປໃນບັນ
ດາພວກເຂົາ, ຈົນວ່າພວກເຂົາຈະເປັນຄົນ
ຂາວ ແລະ [ກ]ໜ້າຊົມ.
7 ແລະ ເຫດການຈະບັງເກີດຂຶ້ນຄື [ກ]ຊາວ
ຢິວຊຶ່ງກະຈັດກະຈາຍໄປຈະ [ຂ]ເລີ່ມເຊື່ອ
ໃນພຣະຄຣິດອີກ; ແລະ ພວກເຂົາຈະເລີ່ມ
ທ້ອນໂຮມກັນເຂົ້າມາໃນຜືນແຜ່ນດິນ;
ແລະ ຫລາຍຕໍ່ຫລາຍຄົນທີ່ຈະເຊື່ອໃນພຣະ
ຄຣິດ ກໍຈະກັບເປັນຜູ້ຄົນທີ່ໜ້າຊົມຄືກັນ.
8 ແລະ ເຫດການຈະບັງເກີດຂຶ້ນຄື ອົງ

**30** 2 *ກ* ຄລຕ 3:26–29.
*ຂ* ມທ 8:10–13.
ຄມພ ຊາວຢິວ.
*ຄ* ຄມພ ກັບໃຈ, ການກັບໃຈ.
3 *ກ* 3 ນຟ 16:6–7.
*ຂ* 1 ນຟ 22:8–9.
5 *ກ* 3 ນຟ 21:3–7, 24–26.
*ຂ* ຄພ 3:20.
*ຄ* 1 ນຟ 15:14;
2 ນຟ 3:12;
ມມ 7:1, 9–10.
6 *ກ* ຄພ 49:24; 109:65.
7 *ກ* 2 ນຟ 29:13–14.
*ຂ* 2 ນຟ 25:16–17.

ພຣະຜູ້ເປັນເຈົ້າ ຈະເລີ່ມທຳງານຂອງພຣະ
ອົງໃນບັນດາທຸກປະຊາຊາດ, ທຸກຕະກຸນ,
ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, ເພື່ອ
ຈະນຳການຟື້ນຟູມາຫາຜູ້ຄົນຂອງພຣະອົງ
ໃນແຜ່ນດິນໂລກ.
9 ແລະ [ກ]ອົງພຣະຜູ້ເປັນເຈົ້າຈະ [ຂ]ພິພາກ
ສາຄົນຍາກຈົນດ້ວຍຄວາມຊອບທຳ, ແລະ
ຕຳນິດ້ວຍຄວາມທ່ຽງທຳ ເພື່ອ [ຄ]ຄົນໃຈ
ອ່ອນໂຍນຂອງແຜ່ນດິນໂລກ. ແລະ ແຜ່ນ
ດິນໂລກຈະຖືກລົງໂທດຕາມຄຳສັ່ງຂອງ
ພຣະອົງ; ແລະ ຄົນຊົ່ວກໍ ຈະຕາຍດ້ວຍຄຳ
ພິພາກສາຂອງພຣະອົງ.
10 ເພາະ ວ່າ [ກ]ເວລາມາເຖິງຢ່າງວ່ອງ
ໄວ ຊຶ່ງອົງພຣະຜູ້ເປັນເຈົ້າຈະເຮັດໃຫ້ເກີດ
[ຂ]ຄວາມແບ່ງແຍກຢ່າງໃຫຍ່ຫລວງໃນບັນ
ດາຜູ້ຄົນ, ແລະ ພຣະອົງຈະທຳລາຍຄົນ
ຊົ່ວ; ແລະ ພຣະອົງຈະ [ຄ]ໄວ້ຊີວິດຜູ້ຄົນຂອງ
ພຣະອົງ, ແທ້ຈິງແລ້ວ, ຖ້າຫາກຈະເປັນໄປ
ວ່າພຣະອົງຈະຕ້ອງ [ງ]ທຳລາຍຄົນຊົ່ວດ້ວຍ
ໄຟ.
11 ແລະ [ກ]ຄວາມ ຊອບ ທຳ ຈະ ເປັນ ຜ້າ
ຄຽນອຸທອນຂອງພຣະອົງ, ແລະ ຄວາມຊື່
ສັດຈະເປັນຜ້າຄຽນບັ້ນອຸທອນຂອງພຣະ
ອົງ.
12 [ກ]ແລະ ຈາກນັ້ນໝາປ່າຈະຢູ່ກັບລູກ
ແກະ, ເສືອດາວຈະນອນຢູ່ນຳລູກແບ້,
ແລະ ລູກງົວກັບສິງໜຸ່ມ, ແລະ ລູກສັດອ້ວນ
ຈະຢູ່ນຳກັນ; ແລະ ເດັກນ້ອຍຄົນໜຶ່ງຈະນຳ
ພວກມັນໄປ.
13 ແລະ ງົວແມ່ກັບໝີຈະກິນນຳກັນ; ລູກ
ຂອງພວກມັນກໍຈະນອນຢູ່ນຳກັນ; ແລະ
ສິງຈະກິນເຟືອງເຂົ້າຄືກັນກັບງົວເຖິກ.
14 ແລະ ເດັກນ້ອຍກິນນົມຈະຫລິ້ນໃນຮູ
ຂອງງູພິດ, ແລະ ເດັກນ້ອຍທີ່ເຊົານົມ ຈະ
ວາງມືຂອງເຂົາໃນກົງງູຮ້າຍ.
15 ພວກມັນຈະບໍ່ທຳຮ້າຍ ຫລື ທຳລາຍ
ໄປທົ່ວພູເຂົາອັນສັກສິດຂອງເຮົາ ເພາະ
ແຜ່ນດິນໂລກຈະເຕັມໄປດ້ວຍຄວາມຮູ້
ກ່ຽວກັບພຣະຜູ້ເປັນເຈົ້າເໝືອນດັ່ງທະເລທີ່
ເຕັມໄປດ້ວຍນ້ຳ.
16 ດັ່ງນັ້ນ, ເລື່ອງຂອງປະຊາຊາດ [ກ]ທັງ
ໝົດຈະເປັນທີ່ຮູ້ຈັກກັນ; ແທ້ຈິງແລ້ວ, ທຸກ
ຢ່າງຈະເປັນທີ່ [ຂ]ຮູ້ຈັກແກ່ລູກຫລານມະນຸດ.
17 ບໍ່ມີຫຍັງທີ່ຈະເປັນຄວາມລັບເພາະ
ມັນຈະຖືກ [ກ]ເປີດເຜີຍ; ຈະບໍ່ມີງານແຫ່ງ
ຄວາມມືດເພາະມັນຈະຖືກສະແດງໃຫ້
ປະຈັກໃນຄວາມສະຫວ່າງ; ແລະ ບໍ່ມີສິ່ງ
ໃດຈະຖືກຜະນຶກໄວ້ໃນແຜ່ນດິນໂລກ
ເພາະມັນຈະຖືກປ່ອຍອອກມາ.
18 ດັ່ງນັ້ນ, ທຸກຢ່າງທີ່ຖືກເປີດເຜີຍແກ່
ລູກຫລານມະນຸດຈະຖືກເປີດເຜີຍໃນນັ້ນ;
ແລະ ຊາຕານຈະບໍ່ມີອຳນາດເໜືອໃຈຂອງ
ລູກຫລານມະນຸດ [ກ]ອີກເປັນເວລາດົນນານ.
ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຂ້າພະເຈົ້າຂໍຈົບຂໍ້ຄວາມຂອງຂ້າພະ
ເຈົ້າໄວ້ເທົ່ານີ້.

## ບົດທີ 31

*ນີໄຟເວົ້າວ່າເປັນດ້ວຍເຫດໃດພຣະຄຣິດ*

9 *ກ* ອຊຢ 11:4–9.
*ຂ* 2 ນຟ 9:15.
*ຄ* ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
10 *ກ* ຄມພ ຍຸກສຸດທ້າຍ.
*ຂ* ຄພ 63:53–54.
*ຄ* ມຊ 7:61.
*ງ* 1 ນຟ 22:15–17, 23. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
11 *ກ* ອຊຢ 11:5–9.
12 *ກ* ອຊຢ 65:25. ຄມພ ພັນປີ.
16 *ກ* ຄພ 101:32–35; 121:28–29.
*ຂ* ອທ 4:6–7.
17 *ກ* ຄພ 1:2–3.
18 *ກ* ພນມ 20:1–3; ອທ 8:26.

*ຈຶ່ງຮັບບັບຕິສະມາ—ມະນຸດຄວນຕິດຕາມພຣະຄຣິດ, ຮັບບັບຕິສະມາ, ຮັບເອົາພຣະວິນຍານບໍລິສຸດ, ແລະ ອົດທົນຈົນເຖິງທີ່ສຸດເພື່ອຄວາມລອດ—ການກັບໃຈ ແລະ ການບັບຕິສະມາແມ່ນປະຕູທີ່ຈະນຳໄປເຖິງທາງຄັບ ແລະ ແຄບ—ຊີວິດນິລັນດອນມາເຖິງຜູ້ທີ່ຮັກສາພຣະບັນຍັດຫລັງຈາກບັບຕິສະມາ. ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້ານີໄຟຈົບ [ກ]ການ
ທຳນາຍຂອງຂ້າພະເຈົ້າທີ່ໃຫ້ກັບພວກ
ທ່ານ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ.
ແລະ ຂ້າພະເຈົ້າໄດ້ບັນທຶກທັງໝົດ ໄວ້ບໍ່
ໄດ້ນອກຈາກສອງສາມເລື່ອງທີ່ຂ້າພະເຈົ້າ
ຮູ້ວ່າຕ້ອງເກີດຂຶ້ນຢ່າງແນ່ນອນ; ທັງຂ້າພະ
ເຈົ້າບັນທຶກໄວ້ບໍ່ໄດ້ນອກຈາກຄຳເວົ້າສອງ
ສາມຄຳຂອງຢາໂຄບນ້ອງຊາຍຂອງຂ້າພະ
ເຈົ້າ.
2 ດັ່ງນັ້ນ, ເລື່ອງທີ່ຂ້າພະເຈົ້າໄດ້ບັນທຶກ
ໄວ້ກໍພຽງພໍສຳລັບຂ້າພະເຈົ້າ, ນອກຈາກ
ຈະເປັນຄຳເວົ້າສອງສາມຄຳ ຊຶ່ງຂ້າພະ
ເຈົ້າຕ້ອງເວົ້າກ່ຽວກັບ [ກ]ຄຳສອນຂອງພຣະ
ຄຣິດ; ດັ່ງນັ້ນ, ຂ້າພະເຈົ້າຈະເວົ້າກັບພວກ
ທ່ານຢ່າງແຈ່ມແຈ້ງຕາມຄວາມແຈ່ມແຈ້ງ
ຂອງການທຳນາຍຂອງຂ້າພະເຈົ້າ.
3 ເພາະຈິດວິນຍານຂອງຂ້າພະເຈົ້າເບີກ
ບານໃນຄວາມແຈ່ມແຈ້ງ; ເພາະຕາມວິທີ
ນີ້ ອົງພຣະຜູ້ເປັນເຈົ້າທຳງານຢູ່ໃນບັນດາ
ລູກຫລານມະນຸດ. ເພາະອົງພຣະຜູ້ເປັນ
ເຈົ້າປະທານ [ກ]ຄວາມສະຫວ່າງໃຫ້ແກ່
ຄວາມເຂົ້າໃຈ; ເພາະພຣະອົງຮັບສັ່ງກັບ
ມະນຸດຕາມ [ຂ]ພາສາຂອງພວກເຂົາ ຊຶ່ງໄປ
ສູ່ຄວາມເຂົ້າໃຈຂອງພວກເຂົາ.
4 ດັ່ງນັ້ນ, ຂ້າພະເຈົ້າຢາກໃຫ້ພວກທ່ານ
ຈົດຈຳວ່າ ຂ້າພະເຈົ້າເວົ້າກັບພວກທ່ານ
ແລ້ວກ່ຽວກັບ [ກ]ສາດສະດາຜູ້ນັ້ນທີ່ພຣະຜູ້
ເປັນເຈົ້າໄດ້ສະແດງໃຫ້ຂ້າພະເຈົ້າເຫັນ, ທີ່
ຈະໃຫ້ບັບຕິສະມາແກ່ [ຂ]ພຣະເມສານ້ອຍ
ຂອງພຣະເຈົ້າ, ຊຶ່ງຈະຍົກເອົາບາບຂອງ
ໂລກໄປ.
5 ແລະ ບັດນີ້, ຖ້າຫາກພຣະເມສານ້ອຍ
ຂອງພຣະເຈົ້າ, ໂດຍທີ່ພຣະອົງບໍລິສຸດຍັງ
ຈຳຕ້ອງຮັບ [ກ]ບັບຕິສະມາດ້ວຍນ້ຳ ເພື່ອໃຫ້
ຄວາມຊອບທຳທັງໝົດສຳເລັດ, ໂອ້ ແລ້ວ
ພວກເຮົາ ໂດຍທີ່ບໍ່ບໍລິສຸດ ຈະຍັງຕ້ອງຮັບ
ບັບຕິສະມາຍິ່ງກວ່ານັ້ນພຽງໃດ, ແທ້ຈິງ
ແລ້ວ, ແມ່ນດ້ວຍນ້ຳ!
6 ແລະ ບັດນີ້, ຂ້າພະເຈົ້າຢາກຖາມ
ພວກທ່ານ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າວ່າ, ດ້ວຍເລື່ອງໃດທີ່ພຣະເມສານ້ອຍ
ຂອງພຣະເຈົ້າໄດ້ເຮັດໃຫ້ຄວາມຊອບທຳ
ທັງໝົດສຳເລັດ ໂດຍການຮັບບັບຕິສະມາ
ດ້ວຍນ້ຳ?
7 ພວກທ່ານບໍ່ຮູ້ບໍວ່າພຣະອົງບໍລິສຸດ?
ແຕ່ເຖິງແມ່ນພຣະອົງບໍລິສຸດ, ພຣະອົງຍັງ
ສະແດງແກ່ລູກຫລານມະນຸດວ່າ ຕາມທາງ
ຂອງເນື້ອໜັງ ພຣະອົງຖ່ອມຕົວຕໍ່ພຣະພັກ
ຂອງພຣະບິດາ, ແລະ ເປັນພະຍານຕໍ່ພຣະ
ບິດາວ່າ ຈະ [ກ]ເຊື່ອຟັງພຣະອົງໃນການຮັກ
ສາພຣະບັນຍັດຂອງພຣະອົງ.
8 ດັ່ງນັ້ນ, ຫລັງຈາກພຣະອົງຮັບບັບຕິ

**31** 1*ກ* 2 ນຟ 25:1–4.
2*ກ* 2 ນຟ 11:6–7.
3*ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ຄພ 1:24.
4*ກ* 1 ນຟ 10:7; 11:27. ຄມພ ໂຢຮັນບັບຕິສະໂຕ.
*ຂ* ຄມພ ພຣະເມສານ້ອຍຂອງພຣະເຈົ້າ.
5*ກ* ມທ 3:11–17. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
7*ກ* ຢຮ 5:30. ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.

ສະມາດ້ວຍນ້ຳແລ້ວ ພຣະວິນຍານບໍລິສຸດ
ຈຶ່ງ ສະເດັດລົງມາເທິງພຣະອົງໃນ [ກ]ຮູບ
[ຂ]ນົກເຂົາ.
9 ແລະ ອີກຢ່າງໜຶ່ງ, ມັນສະແດງໃຫ້ລູກ
ຫລານມະນຸດເຫັນຄວາມຄັບຂອງທາງ,
ແລະ ຄວາມແຄບຂອງ [ກ]ປະຕູ, ຊຶ່ງໂດຍ
ທາງນັ້ນພວກເຂົາຈະເຂົ້າໄປໂດຍທີ່ພຣະ
ອົງເຮັດເປັນຕົວຢ່າງໄວ້ຕໍ່ໜ້າພວກເຂົາ
ແລ້ວ.
10 ແລະ ພຣະອົງໄດ້ກ່າວກັບລູກຫລານ
ມະນຸດວ່າ: ພວກທ່ານຈົ່ງ [ກ]ຕາມເຮົາມາ
ເຖີດ. ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ພວກເຮົາຈະ [ຂ]ຕາມພຣະເຢຊູໄດ້ບໍ
ນອກຈາກພວກເຮົາຈະເຕັມໃຈຮັກສາພຣະ
ບັນຍັດຂອງພຣະບິດາ?
11 ແລະ ພຣະບິດາໄດ້ກ່າວວ່າ: ຈົ່ງກັບ
ໃຈ! ຈົ່ງກັບໃຈ, ແລະ ຮັບບັບຕິສະມາໃນ
ພຣະນາມຂອງບຸດທີ່ຮັກຂອງເຮົາ.
12 ແລະ ສຸລະສຽງຂອງພຣະບຸດມາເຖິງ
ຂ້າພະເຈົ້າອີກ, ມີຄວາມວ່າ: ຄົນທີ່ຮັບບັບຕິ
ສະມາໃນນາມຂອງເຮົາ, ພຣະບິດາຈະ
[ກ]ປະທານພຣະວິນຍານບໍລິສຸດໃຫ້ພວກ
ເຂົາເໝືອນກັບເຮົາ; ດັ່ງນັ້ນ, ຈົ່ງ [ຂ]ຕາມເຮົາ
ມາ, ແລະ ເຮັດສິ່ງທີ່ເຈົ້າເຫັນເຮົາເຮັດ.
13 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າຮູ້ວ່າ ຖ້າຫາກພວກ
ທ່ານຈະໄປຕາມພຣະບຸດດ້ວຍຈຸດປະສົງ
ເຕັມທີ່ແຫ່ງໃຈ ໂດຍບໍ່ເປັນຄົນໜ້າຊື່ໃຈ
ຄົດ ແລະ ບໍ່ມີການຫລອກລວງຕໍ່ພຣະພັກ
ຂອງພຣະເຈົ້າ, ແຕ່ດ້ວຍເຈດຕະນາອັນແທ້
ຈິງ, ໂດຍການກັບໃຈຈາກບາບຂອງພວກ
ທ່ານ, ໂດຍການເປັນພະຍານຕໍ່ພຣະບິດາ
ວ່າ ພວກທ່ານເຕັມໃຈຮັບເອົາພຣະນາມ
ຂອງພຣະຄຣິດໂດຍ [ກ]ການບັບຕິສະມາ—
ແທ້ຈິງແລ້ວ, ໂດຍການຕາມພຣະຜູ້ເປັນ
ເຈົ້າ ແລະ ພຣະຜູ້ຊ່ອຍໃຫ້ລອດຂອງທ່ານ
ລົງໄປໃນນ້ຳຕາມພຣະຄຳຂອງພຣະອົງ ຈົ່ງ
ເບິ່ງເມື່ອນັ້ນທ່ານຈະໄດ້ຮັບພຣະວິນຍານບໍ
ລິສຸດ; ແທ້ຈິງແລ້ວ, ເມື່ອນັ້ນ [ຂ]ການບັບຕິ
ສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍ
ລິສຸດຈະມາເຖິງ; ແລະ ເມື່ອນັ້ນພວກທ່ານ
ຈະເວົ້າໄດ້ດ້ວຍ [ຄ]ລີ້ນຂອງທູດ, ແລະ ຮ້ອງ
ສັນລະເສີນແດ່ພຣະຜູ້ບໍລິສຸດຂອງອິດສະ
ຣາເອນ.
14 ແຕ່ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ສຸລະສຽງຂອງພຣະບຸດມາເຖິງ
ຂ້າພະເຈົ້າ, ມີຄວາມວ່າ: ຫລັງຈາກເຈົ້າກັບ
ໃຈຈາກບາບຂອງເຈົ້າ ແລະ ເປັນພະຍານ
ຕໍ່ພຣະບິດາວ່າ ເຈົ້າເຕັມໃຈຮັກສາບັນຍັດ
ຂອງເຮົາ ໂດຍການບັບຕິສະມາດ້ວຍນ້ຳ,
ແລະ ຮັບການບັບຕິສະມາດ້ວຍໄຟ ແລະ
ດ້ວຍພຣະວິນຍານບໍລິສຸດ, ແລະ ເວົ້າດ້ວຍ
ວາຈາໃໝ່, ແທ້ຈິງແລ້ວ, ແມ່ນດ້ວຍວາຈາ
ຂອງທູດ, ແລະ ຫລັງຈາກນັ້ນຈະ [ກ]ປະຕິ
ເສດເຮົາ, ມັນຈະເປັນການ [ຂ]ດີກວ່າ ສຳລັບ
ເຈົ້າຖ້າຫາກເຈົ້າບໍ່ໄດ້ຮູ້ຈັກເຮົາເລີຍ.
15 ແລະ ຂ້າພະເຈົ້າໄດ້ຍິນສຸລະສຽງ
ຈາກພຣະບິດາ, ມີຄວາມວ່າ: ແທ້ຈິງແລ້ວ,

8 ກ 1 ນຟ 11:27.
ຂ ຄມພ ນົກເຂົາ, ເຄື່ອງໝາຍຂອງ.
9 ກ 2 ນຟ 9:41; 3 ນຟ 14:13–14; ຄພ 22:4.
10 ກ ມທ 4:19; 8:22; 9:9.
ຂ ມຣນ 7:11; ຄພ 56:2.
12 ກ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
ຂ ລກ 9:57–62; ຢຮ 12:26.
13 ກ ຄລຕ 3:26–27.
ຂ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ; ໄຟ.
ຄ 2 ນຟ 32:2–3.
14 ກ ມທ 10:32–33; ແອວ 24:30; ຄພ 101:1–5. ຄມພ ບາບທີ່ອະໄພໃຫ້ບໍ່ໄດ້.
ຂ 2 ປຕ 2:21.

ຄຳຂອງຜູ້ເປັນທີ່ຮັກຂອງເຮົາຈິງ ແລະ ຊື່
ສັດ. ຜູ້ໃດອົດທົນຈົນເຖິງທີ່ສຸດ ຜູ້ນັ້ນຈະ
ລອດ.
16 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຂ້າພະເຈົ້າຮູ້ດ້ວຍສິ່ງນີ້ວ່າ
ນອກຈາກມະນຸດຈະ [ກ]ອົດທົນຈົນເຖິງທີ່
ສຸດໃນການທຳຕາມ [ຂ]ຕົວຢ່າງຂອງພຣະ
ບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ເຂົາຈະ
ລອດບໍ່ໄດ້.
17 ດັ່ງນັ້ນ, ຈົ່ງເຮັດສິ່ງທີ່ຂ້າພະເຈົ້າບອກ
ພວກທ່ານວ່າຂ້າພະເຈົ້າໄດ້ເຫັນພຣະຜູ້
ເປັນເຈົ້າຂອງພວກທ່ານ ແລະ ພຣະຜູ້ໄຖ່
ຂອງພວກທ່ານເຮັດ; ເພາະດ້ວຍເຫດນີ້
ສິ່ງເຫລົ່ານີ້ຈຶ່ງຖືກສະແດງແກ່ຂ້າພະເຈົ້າ
ເພື່ອພວກທ່ານຈະໄດ້ຮູ້ຈັກປະຕູ ຊຶ່ງໂດຍ
ທາງນັ້ນພວກທ່ານຄວນເຂົ້າໄປ. ເພາະ
ປະຕູທີ່ພວກທ່ານຄວນເຂົ້າໄປຄືການກັບ
ໃຈ ແລະ ຮັບ [ກ]ການບັບຕິສະມາດ້ວຍນ້ຳ;
ແລະ ເວລານັ້ນ [ຂ]ການປົດບາບຂອງພວກ
ທ່ານຈະມາເຖິງໂດຍໄຟ ແລະ ໂດຍພຣະ
ວິນຍານບໍລິສຸດ.
18 ແລະ ເມື່ອພວກທ່ານຍອມຢູ່ໃນ
[ກ]ທາງ [ຂ]ຄັບ ແລະ ແຄບນີ້ຊຶ່ງນຳໄປຫາຊີ
ວິດນິລັນດອນ; ແທ້ຈິງແລ້ວ, ພວກທ່ານ
ເຂົ້າໄປໃນປະຕູແລ້ວ; ພວກທ່ານເຮັດຕາມ
ພຣະບັນຍັດຂອງພຣະບິດາ ແລະ ພຣະ
ບຸດ; ແລະ ພວກທ່ານຮັບພຣະວິນຍານບໍລິ
ສຸດ ຊຶ່ງເປັນ [ຄ]ພະຍານເຖິງພຣະບິດາ ແລະ
ພຣະບຸດເພື່ອໃຫ້ສັນຍາ ຊຶ່ງພຣະອົງເຮັດ
ໄວ້ສຳເລັດ, ຄືຖ້າຫາກພວກທ່ານເຂົ້າໄປ
ທາງນັ້ນ ພວກທ່ານຈະໄດ້ຮັບ.
19 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຫລັງຈາກພວກທ່ານເຂົ້າໄປ
ໃນທາງຄັບ ແລະ ແຄບນັ້ນແລ້ວ, ຂ້າພະ
ເຈົ້າຢາກຖາມວ່າເຮັດທຸກຢ່າງ [ກ]ແລ້ວບໍ?
ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ,
ບໍ່ເລີຍ; ເພາະພວກທ່ານບໍ່ໄດ້ມາເຖິງທີ່ນີ້
ນອກຈາກເປັນໄປໂດຍພຣະຄຳຂອງພຣະ
ຄຣິດ, ພ້ອມດ້ວຍ [ຂ]ສັດທາອັນບໍ່ສັ່ນສະ
ເທືອນໃນພຣະອົງ, ໂດຍ [ຄ]ໄວ້ວາງໃຈຢ່າງ
ເຕັມທີ່ໃນພຣະຄຸນຄວາມດີຂອງພຣະອົງ ຜູ້
ຊົງອານຸພາບເພື່ອຊ່ວຍໃຫ້ລອດ.
20 ດັ່ງນັ້ນ, ພວກທ່ານຕ້ອງ [ກ]ມຸ້ງໜ້າ
ດ້ວຍຄວາມໝັ້ນຄົງໃນພຣະຄຣິດ, ໂດຍມີ
ຄວາມສະຫວ່າງຢ່າງບໍລິບູນຂອງ [ຂ]ຄວາມ
ຫວັງ ແລະ [ຄ]ຄວາມຮັກຂອງພຣະເຈົ້າ ແລະ
ຂອງມະນຸດທັງປວງ. ດັ່ງນັ້ນ, ຖ້າຫາກພວກ
ທ່ານຈະມຸ້ງໜ້າຊື່ນຊົມດ້ວຍພຣະຄຳຂອງ
ພຣະຄຣິດ ແລະ [ງ]ອົດທົນຈົນເຖິງທີ່ສຸດ
ແລ້ວ, ຈົ່ງເບິ່ງ, ພຣະບິດາໄດ້ກ່າວໄວ້ດັ່ງນີ້:
ເຈົ້າຈະມີຊີວິດນິລັນດອນ.
21 ແລະ ບັດນີ້, ຈົ່ງເບິ່ງພີ່ນ້ອງທີ່ຮັກແພງ
ຂອງຂ້າພະເຈົ້າ, ນີ້ຄື [ກ]ທາງນັ້ນ ແລະ [ຂ]ບໍ່
ມີທາງ ຫລື [ຄ]ພຣະນາມອື່ນໃດຈະປະທານ
ໃຫ້ພາຍໃຕ້ສະຫວັນອີກເລີຍ ຊຶ່ງໂດຍທາງ
ນັ້ນມະນຸດຈະລອດໄດ້ໃນອານາຈັກຂອງ

16 *ກ* ແອວ 5:13; 38:2; ຄພ 20:29.
*ຂ* ຄມພ ພຣະເຢຊູຄຣິດ—ຕົວຢ່າງຂອງພຣະເຢຊູຄຣິດ.
17 *ກ* ມຊຢ 18:10. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* ຄມພ ປົດບາບ, ການປົດບາບ.
18 *ກ* ສພສ 4:18. ຄມພ ວິທີທາງ.
*ຂ* 1 ນຟ 8:20.
*ຄ* ກຈກ 5:29–32.
19 *ກ* ມຊຢ 4:10.
*ຂ* ຄມພ ສັດທາ.
*ຄ* ຄພ 3:20.
20 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ຂ* ຄມພ ຫວັງ, ຄວາມຫວັງ.
*ຄ* ຄມພ ຮັກ, ຄວາມຮັກ.
*ງ* ຄມພ ອົດທົນ, ຄວາມອົດທົນ.
21 *ກ* ກຈກ 4:10–12; 2 ນຟ 9:41; ແອວ 37:46; ຄພ 132:22, 25.
*ຂ* ມຊຢ 3:17.
*ຄ* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.

ພຣະເຈົ້າ. ແລະ ບັດນີ້, ຈົ່ງເບິ່ງ ນີ້ຄື [ງ]ຄຳ
ສອນຂອງພຣະຄຣິດ, ແລະ ຄືຄຳສອນອັນ
ດຽວ ແລະ ແທ້ຈິງຂອງ [ຈ]ພຣະບິດາ ແລະ
ຂອງພຣະບຸດ ແລະ ຂອງພຣະວິນຍານບໍລິ
ສຸດ, ຊຶ່ງເປັນ [ສ]ພຣະເຈົ້າອົງດຽວ, ທີ່ເປັນຢູ່
ຕະຫລອດການ. ອາແມນ.

## ບົດທີ 32

*ເຫລົ່າທູດກ່າວ ໂດຍອຳນາດຂອງພຣະ
ວິນຍານບໍລິສຸດ—ມະນຸດຄວນອະທິຖານ
ແລະ ຮັບຄວາມຮູ້ເພີ່ມເຕີມເພື່ອຕົວເອງ
ຈາກພຣະວິນຍານບໍລິສຸດ. ປະມານ 559–
545 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ຈົ່ງເບິ່ງພີ່ນ້ອງທີ່ຮັກແພງ
ຂອງຂ້າພະເຈົ້າ, ຂ້າພະເຈົ້າຄິດວ່າພວກ
ທ່ານໄຕ່ຕອງຢູ່ໃນໃຈແລ້ວກ່ຽວກັບສິ່ງທີ່
ພວກທ່ານຄວນເຮັດຫລັງຈາກເຂົ້າໄປໃນ
ທາງນັ້ນ. ແຕ່ຈົ່ງເບິ່ງ, ເຫດໃດພວກທ່ານຈຶ່ງ
ໄຕ່ຕອງເລື່ອງເຫລົ່ານີ້ຢູ່ໃນໃຈອີກ?
2 ພວກທ່ານຈຳໄດ້ບໍວ່າ ຂ້າພະເຈົ້າເວົ້າ
ກັບພວກທ່ານວ່າ ຫລັງຈາກ [ກ]ຮັບພຣະວິນ
ຍານບໍລິສຸດແລ້ວ ພວກທ່ານຈະເວົ້າດ້ວຍ
ລີ້ນຂອງທູດ? ແລະ ບັດນີ້, ພວກທ່ານຈະ
ເວົ້າດ້ວຍ [ຂ]ລີ້ນຂອງທູດໄດ້ແນວໃດນອກ
ຈາກຈະເປັນໄປໂດຍພຣະວິນຍານບໍລິສຸດ?
3 [ກ]ເຫລົ່າທູດກ່າວ ໂດຍອຳນາດຂອງ
ພຣະວິນຍານບໍລິສຸດ; ດັ່ງນັ້ນ ພວກເພິ່ນ
ຈຶ່ງກ່າວພຣະຄຳຂອງພຣະຄຣິດ. ດັ່ງນັ້ນ,
ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ຈົ່ງ [ຂ]ຊື່ນ
ຊົມດ້ວຍພຣະຄຳຂອງພຣະຄຣິດ; ເພາະ
ຈົ່ງເບິ່ງ, ພຣະຄຳຂອງພຣະຄຣິດຈະບອກ
ພວກທ່ານທຸກຢ່າງທີ່ພວກທ່ານຄວນເຮັດ.
4 ດັ່ງນັ້ນ, ບັດນີ້ຫລັງຈາກຂ້າພະເຈົ້າເວົ້າ
ຂໍ້ຄວາມນີ້ແລ້ວ ຖ້າຫາກພວກທ່ານບໍ່ເຂົ້າ
ໃຈມັນກໍເປັນເພາະພວກທ່ານບໍ່ [ກ]ໝັ່ນຂໍ
ແລະ ທັງພວກທ່ານບໍ່ໝັ່ນເຄາະ; ດັ່ງນັ້ນ,
ພວກທ່ານຈຶ່ງບໍ່ຖືກພາມາຫາຄວາມສະ
ຫວ່າງ, ແຕ່ຕ້ອງຕາຍຢູ່ໃນຄວາມມືດ.
5 ເພາະຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກ
ທ່ານອີກວ່າ ຖ້າຫາກພວກທ່ານຈະເຂົ້າໄປ
ໂດຍທາງນັ້ນ ແລະ ໄດ້ຮັບພຣະວິນຍານບໍ
ລິສຸດ, ພຣະອົງຈະສະແດງທຸກຢ່າງທີ່ພວກ
ທ່ານຄວນເຮັດໃຫ້ແກ່ພວກທ່ານ.
6 ຈົ່ງເບິ່ງ, ນີ້ຄືຄຳສອນຂອງພຣະຄຣິດ,
ແລະ ຈະບໍ່ມີຄຳສອນປະທານໃຫ້ອີກຈົນ
ຫລັງຈາກພຣະອົງຈະ [ກ]ສະແດງພຣະອົງ
ເອງໃຫ້ປະຈັກແກ່ພວກທ່ານໃນເນື້ອໜັງ.
ແລະ ເມື່ອພຣະອົງຈະສະແດງພຣະອົງເອງ
ໃຫ້ປະຈັກແກ່ທ່ານໃນເນື້ອໜັງແລ້ວ, ສິ່ງທີ່
ພຣະອົງຈະກ່າວກັບພວກທ່ານ, ພວກທ່ານ
ຈົ່ງປະຕິບັດ.
7 ແລະ ບັດນີ້, ຂ້າພະເຈົ້ານີໄຟເວົ້າອີກບໍ່
ໄດ້; ພຣະວິນຍານຢຸດການເອີ່ຍປາກຂອງ
ຂ້າພະເຈົ້າ ແລະ ຂ້າພະເຈົ້າຈະຖືກຖິ້ມ
ໃຫ້ເປັນທຸກເພາະຄວາມ [ກ]ບໍ່ເຊື່ອຖື, ແລະ
ຄວາມຊົ່ວຮ້າຍ, ແລະ ຄວາມໂງ່ຈ້າ ແລະ
ຄວາມແຂງຄໍຂອງມະນຸດ; ເພາະພວກເຂົາ
ບໍ່ສະແຫວງຫາຄວາມຮູ້ທັງບໍ່ເຂົ້າໃຈຄວາມ
ຮູ້ອັນຍິ່ງໃຫຍ່ທີ່ມີໃຫ້ພວກເຂົາດ້ວຍຄວາມ
ແຈ່ມແຈ້ງ, ເຖິງແມ່ນຄວາມແຈ່ມແຈ້ງເທົ່າ
ທີ່ຖ້ອຍຄຳຈະ [ຂ]ແຈ່ມແຈ້ງໄດ້.

21 *ງ* ມທ 7:28; ຢຣ 7:16–17.
*ຈ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ສ* 3 ນຟ 11:27, 35–36. ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.

**32** 2 *ກ* 3 ນຟ 9:20.
*ຂ* 2 ນຟ 31:13.
3 *ກ* ຄມພ ທູດ, ເທວະດາ.
*ຂ* ຢມຢ 15:16.
4 *ກ* ຄມພ ທູນຂໍ.
6 *ກ* 3 ນຟ 11:8.
7 *ກ* ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
*ຂ* 2 ນຟ 31:2–3; ຢຄ 4:13.

8 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າເຫັນວ່າ ພວກທ່ານຍັງ
ໄຕ່ຕອງຢູ່ໃນໃຈ; ແລະ ມັນເຮັດໃຫ້ຂ້າພະ
ເຈົ້າໂສກເສົ້າທີ່ຕ້ອງໄດ້ເວົ້າກ່ຽວກັບເລື່ອງ
ນີ້ກັບພວກທ່ານ. ເພາະຖ້າຫາກພວກທ່ານ
ຈະ ເຊື່ອ ຟັງ ພຣະ ວິນ ຍານ ຊຶ່ງ ສິດສອນ
ມະນຸດໃຫ້ [ກ]ອະທິຖານ, ພວກທ່ານຈະຮູ້
ວ່າພວກທ່ານຕ້ອງອະທິຖານ; ເພາະ [ຂ]ວິນ
ຍານຊົ່ວບໍ່ສິດສອນມະນຸດໃຫ້ອະທິຖານ,
ແຕ່ສິດສອນເຂົາວ່າບໍ່ຕ້ອງອະທິຖານ.
9 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຂໍເວົ້າກັບພວກ
ທ່ານວ່າ ພວກທ່ານຕ້ອງ [ກ]ອະທິຖານສະເໝີ
ແລະ ບໍ່ຕ້ອງທໍ້ຖອຍ; ວ່າພວກທ່ານຕ້ອງບໍ່
ເຮັດສິ່ງໃດທີ່ຈະຖວາຍແດ່ພຣະຜູ້ເປັນເຈົ້າ
ນອກຈາກຂັ້ນທຳອິດພວກທ່ານຕ້ອງອະ
ທິຖານຫາພຣະບິດາໃນ [ຂ]ພຣະນາມຂອງ
ພຣະຄຣິດເສຍກ່ອນ, ເພື່ອພຣະອົງຈະ
ເຮັດໃຫ້ການປະຕິບັດຂອງພວກທ່ານສັກ
ສິດແກ່ພວກທ່ານ, ເພື່ອການປະຕິບັດຂອງ
ພວກທ່ານຈະເປັນໄປເພື່ອ [ຄ]ຄວາມຜາສຸກ
ຂອງຈິດວິນຍານຂອງພວກທ່ານເອງ.

## ບົດທີ 33

*ຄຳເວົ້າຂອງນີໄຟເປັນຄວາມຈິງ—ມັນເປັນ
ພະຍານເຖິງພຣະຄຣິດ—ຜູ້ທີ່ເຊື່ອໃນພຣະ
ຄຣິດຈະເຊື່ອຖ້ອຍຄຳຂອງນີໄຟ, ຊຶ່ງຈະ
ຢືນເປັນພະຍານຕໍ່ໜ້າບັນລັງພິພາກສາ.
ປະມານ 559–545 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຂ້າພະເຈົ້ານີໄຟບັນທຶກ
ເລື່ອງທັງໝົດທີ່ສິດສອນໃນບັນດາຜູ້ຄົນ
ຂອງຂ້າພະເຈົ້າໄວ້ບໍ່ໄດ້; ທັງຂ້າພະເຈົ້າ
ບໍ່ສາມາດບັນທຶກ [ກ]ໄວ້ໄດ້ດີເທົ່າກັບການ
ເວົ້າ; ເພາະວ່າເມື່ອມີຜູ້ໃດ [ຂ]ເວົ້າໂດຍ
ອຳນາດຂອງພຣະວິນຍານບໍລິສຸດ ອຳນາດ
ຂອງພຣະວິນຍານບໍລິສຸດຍ່ອມນຳຄຳເວົ້າ
ໄປຫາໃຈຂອງລູກຫລານມະນຸດ.
2 ແຕ່ຈົ່ງເບິ່ງ, ມີຄົນເປັນຈຳນວນຫລວງ
ຫລາຍທີ່ເຮັດໃຈ [ກ]ແຂງກະດ້າງຕໍ່ພຣະວິນ
ຍານສັກສິດ ຈົນພຣະອົງບໍ່ມີບ່ອນຢູ່ໃນ
ພວກເຂົາ; ດັ່ງນັ້ນ, ພວກເຂົາຈຶ່ງປະຖິ້ມ
ຫລາຍສິ່ງຫລາຍຢ່າງທີ່ໄດ້ບັນທຶກໄວ້ ແລະ
ຖືວ່າມັນບໍ່ມີຄຸນຄ່າ.
3 ແຕ່ຂ້າພະເຈົ້ານີໄຟບັນທຶກເລື່ອງທີ່ຂ້າ
ພະເຈົ້າໄດ້ຂຽນໄວ້, ແລະ ຂ້າພະເຈົ້າຖືວ່າ
ມັນມີ [ກ]ຄຸນຄ່າອັນໃຫຍ່ຫລວງ, ແລະ ໂດຍ
ສະເພາະຕໍ່ຜູ້ຄົນຂອງຂ້າພະເຈົ້າ. ເພາະ
ຂ້າພະເຈົ້າ [ຂ]ອະທິຖານຢູ່ຕະຫລອດເວລາ
ເພື່ອພວກເຂົາໃນເວລາກາງເວັນ, ແລະ
ຕາຂອງຂ້າພະເຈົ້າເຮັດໃຫ້ໝອນຂອງຂ້າ
ພະເຈົ້າປຽກໃນເວລາກາງຄືນ ເພາະພວກ
ເຂົາ; ແລະ ຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າ
ຂອງຂ້າພະເຈົ້າດ້ວຍສັດທາ ແລະ ຂ້າພະ
ເຈົ້າຮູ້ວ່າ, ພຣະອົງຈະໄດ້ຍິນສຽງຂອງຂ້າ
ພະເຈົ້າ.
4 ແລະ ຂ້າພະເຈົ້າຮູ້ວ່າ ອົງພຣະຜູ້ເປັນ
ເຈົ້າຈະອຸທິດຄຳອະທິຖານຂອງຂ້າພະເຈົ້າ
ເພື່ອຜົນປະໂຫຍດຂອງຜູ້ຄົນຂອງຂ້າພະ
ເຈົ້າ. ແລະ ຂໍ້ຄວາມທີ່ຂ້າພະເຈົ້າບັນທຶກໄວ້
ດ້ວຍຄວາມອ່ອນແອຈະຖືກເຮັດໃຫ້ [ກ]ເຂັ້ມ
ແຂງຂຶ້ນເພື່ອພວກເຂົາ; ເພາະມັນຈະ [ຂ]ຊັກ
ຊວນໃຫ້ພວກເຂົາເຮັດຄວາມດີ; ມັນຈະ

8 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ມຊຢ 4:14. ຄມພ ມານ.
9 *ກ* 3 ນຟ 20:1; ຄພ 75:11.
*ຂ* ມຊ 5:8.
*ຄ* ແອວ 34:27.
**33** 1 *ກ* ອທ 12:23–24.
*ຂ* ຄພ 100:7–8.
2 *ກ* ຣລມ 6:35–36.
3 *ກ* ຄມພ ພຣະຄຳພີ— ຄຸນຄ່າຂອງພຣະຄຳພີ.
*ຂ* ອນ 1:9–12; ຄມ 1:8.
4 *ກ* ອທ 12:26–27.
*ຂ* ມຣນ 7:13.

ເຮັດໃຫ້ພວກເຂົາຮູ້ເລື່ອງບັນພະບຸລຸດຂອງ
ພວກເຂົາ; ແລະ ມັນກ່າວ ເຖິງພຣະເຢຊູ
ແລະ ຊັກຊວນໃຫ້ພວກເຂົາເຊື່ອໃນພຣະ
ອົງ ແລະ ອົດທົນຈົນເຖິງທີ່ສຸດ ຊຶ່ງມັນຄືຊີ
ວິດ [ຄ]ນິລັນດອນ.
5 ແລະ ມັນໄດ້ກ່າວ [ກ]ຮຸນແຮງຕິຕຽນ
ບາບ, ຕາມ [ຂ]ຄວາມແຈ່ມແຈ້ງຂອງຄວາມ
ຈິງ; ດັ່ງນັ້ນ, ບໍ່ມີຜູ້ໃດຈະກຽດຊັງ ຂໍ້ຄວາມທີ່
ຂ້າພະເຈົ້າບັນທຶກໄວ້ນອກຈາກພວກເຂົາ
ຈະເປັນຂອງວິນຍານຂອງມານ.
6 ຂ້າພະເຈົ້າປາບປື້ມໃນຄວາມແຈ່ມ
ແຈ້ງ; ຂ້າພະເຈົ້າປາບປື້ມໃນຄວາມຈິງ; ຂ້າ
ພະເຈົ້າປາບປື້ມໃນພຣະເຢຊູຂອງຂ້າພະ
ເຈົ້າ, ເພາະພຣະອົງໄດ້ [ກ]ໄຖ່ຈິດວິນຍານ
ຂອງຂ້າພະເຈົ້າຈາກນະລົກ.
7 ຂ້າພະເຈົ້າມີ [ກ]ຄວາມໃຈບຸນຕໍ່ຜູ້ຄົນ
ຂອງຂ້າພະເຈົ້າ, ແລະ ສັດທາອັນແຮງກ້າ
ໃນພຣະຄຣິດ ວ່າຂ້າພະເຈົ້າຈະພົບຈິດວິນ
ຍານຫລວງຫລາຍທີ່ບໍ່ມີມົນທິນທີ່ບັນລັງພິ
ພາກສາຂອງພຣະອົງ.
8 ຂ້າພະເຈົ້າມີຄວາມໃຈບຸນຕໍ່ [ກ]ຊາວ
ຢິວ—ຂ້າພະເຈົ້າກ່າວວ່າຊາວຢິວເພາະ
ຂ້າພະເຈົ້າໝາຍເຖິງຜູ້ຊຶ່ງຂ້າພະເຈົ້າໄດ້ໜີ
ຈາກມາ.
9 ແລະ ຂ້າພະເຈົ້າມີຄວາມໃຈບຸນຕໍ່
[ກ]ຄົນຕ່າງຊາດນຳອີກ. ແຕ່ຈົ່ງເບິ່ງ, ຂ້າພະ
ເຈົ້າຫວັງໃນຄົນເຫລົ່ານີ້ບໍ່ໄດ້ ຖ້າຫາກ
ພວກເຂົາບໍ່ [ຂ]ປອງດອງກັບພຣະຄຣິດ,
ແລະ ເຂົ້າໄປໃນປະຕູທີ່ [ຄ]ແຄບ ແລະ [ງ]ເດີນ
ໄປໃນທາງທີ່ [ຈ]ຄັບ ຊຶ່ງນຳໄປສູ່ຊີວິດ, ແລະ
ດຳເນີນຕໍ່ໄປໃນທາງນັ້ນຈົນເຖິງທີ່ສຸດຂອງ
ວັນເວລາແຫ່ງການທົດລອງ.
10 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າກັບຊາວຢິວນຳອີກ, ແລະ ພວກ
ທ່ານທັງຫລາຍທີ່ສຸດຂອງແຜ່ນດິນໂລກ,
ຈົ່ງເຊື່ອຟັງຂໍ້ຄວາມເຫລົ່ານີ້ ແລະ [ກ]ເຊື່ອໃນ
ພຣະຄຣິດ; ແລະ ຖ້າຫາກພວກທ່ານບໍ່ເຊື່ອ
ໃນຂໍ້ຄວາມເຫລົ່ານີ້ກໍຈົ່ງໃຫ້ເຊື່ອໃນພຣະ
ຄຣິດ. ແລະ ຖ້າຫາກພວກທ່ານຈະເຊື່ອ
ໃນພຣະຄຣິດ ພວກທ່ານຈະເຊື່ອໃນ [ຂ]ຂໍ້
ຄວາມເຫລົ່ານີ້, ເພາະມັນເປັນ [ຄ]ພຣະຄຳ
ຂອງພຣະຄຣິດ, ແລະ ພຣະອົງໄດ້ປະທານ
ໃຫ້ຂ້າພະເຈົ້າ; ແລະ ມັນ [ງ]ສິດສອນຄົນທັງ
ປວງວ່າ ພວກເຂົາຄວນເຮັດຄວາມດີ.
11 ແລະ ຖ້າຫາກພວກທ່ານຕັດສິນວ່າ
ມັນບໍ່ເປັນພຣະຄຳຂອງພຣະຄຣິດ—ເພາະ
ພຣະຄຣິດຈະສະແດງແກ່ພວກທ່ານໃນ
ວັນສຸດທ້າຍດ້ວຍ [ກ]ອຳນາດ ແລະ ລັດສະ
ໝີພາບອັນຍິ່ງໃຫຍ່ວ່າ ມັນເປັນພຣະຄຳ
ຂອງພຣະອົງ; ແລະ ພວກທ່ານກັບຂ້າພະ
ເຈົ້າຈະປະເຊີນໜ້າກັນຢູ່ [ຂ]ບ່ອນພິພາກ
ສາຂອງພຣະອົງ; ແລະ ພວກທ່ານຈະຮູ້ວ່າ
ຂ້າພະເຈົ້າໄດ້ຮັບບັນຊາຈາກພຣະອົງໃຫ້
ບັນທຶກເລື່ອງເຫລົ່ານີ້ເຖິງແມ່ນຂ້າພະເຈົ້າ
ອ່ອນແອ.
12 ແລະ ຂ້າພະເຈົ້າອະທິຖານຕໍ່ພຣະ
ບິດາ ໃນ ພຣະນາມຂອງພຣະຄຣິດວ່າ
ຫລາຍຄົນພວກເຮົາຖ້າຫາກບໍ່ແມ່ນໝົດ

4 *ຄ* ຄມພ ຊີວິດນິລັນດອນ.
5 *ກ* 1 ນຟ 16:1–3; 2 ນຟ 9:40.
*ຂ* 2 ນຟ 31:3; ຢຄ 4:13.
6 *ກ* ຄມພ ໄຖ່, ການໄຖ່, ຖືກໄຖ່.
7 *ກ* ຄມພ ໃຈບຸນ, ຄວາມໃຈບຸນ.
8 *ກ* ຄມພ ຊາວຢິວ.
9 *ກ* ຄມພ ຄົນຕ່າງຊາດ.
*ຂ* ຄມພ ຊົດໃຊ້, ການຊົດໃຊ້.
*ຄ* 2 ນຟ 9:41.
*ງ* ຄມພ ເດີນ, ເດີນໄປ ກັບພຣະເຈົ້າ.
*ຈ* ຣລມ 3:29–30; ຄພ 132:22.
10 *ກ* ຄມພ ເຊື່ອ, ຄວາມເຊື່ອ.
*ຂ* ຄມພ ພຣະຄຳພີມໍມອນ.
*ຄ* ມຣນ 10:27–29.
*ງ* 2 ນຟ 25:28.
11 *ກ* ອທ 5:4; ມຣນ 7:35.
*ຂ* ພນມ 20:12; ມຣນ 10:34.

ທຸກຄົນ ຂໍໃຫ້ໄດ້ຮັບຄວາມລອດໃນ [ກ]ອາ
ນາຈັກຂອງພຣະອົງໃນວັນຍິ່ງໃຫຍ່ ແລະ
ສຸດທ້າຍນັ້ນເທີ້ນ.
13 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຄົນທັງປວງທີ່ເປັນເຊື້ອສາຍ
ອິດສະຣາເອນ, ແລະ ທ່ານທັງຫລາຍທີ່ສຸດ
ຂອງແຜ່ນດິນໂລກ, ຂ້າພະເຈົ້າຂໍເວົ້າກັບ
ພວກທ່ານຄືສຽງຂອງຄົນທີ່ [ກ]ຮ້ອງອອກມາ
ຈາກພື້ນດິນ: ລາກ່ອນຈົນກວ່າວັນອັນຍິ່ງ
ໃຫຍ່ນັ້ນຈະມາເຖິງ.
14 ແລະ ຕໍ່ຜູ້ທີ່ບໍ່ຍອມຮັບພຣະກະລຸນາ
ທິຄຸນຂອງພຣະເຈົ້າ, ແລະ ບໍ່ນັບຖື [ກ]ຖ້ອຍ
ຄຳຂອງຊາວຢິວ, ແລະ [ຂ]ຄຳເວົ້າຂອງຂ້າ
ພະເຈົ້ານຳອີກ, ແລະ ກັບຖ້ອຍຄຳຊຶ່ງຈະ
ອອກຈາກປາກຂອງພຣະເມສານ້ອຍຂອງ
ພຣະເຈົ້າ, ຈົ່ງເບິ່ງ, ຂ້າພະເຈົ້າຂໍກ່າວອຳ
ລາອັນເປັນນິດກັບທ່ານ, ເພາະຂໍ້ຄວາມ
ເຫລົ່ານີ້ຈະ [ຄ]ກ່າວໂທດທ່ານໃນວັນສຸດ
ທ້າຍ.
15 ເພາະສິ່ງທີ່ຂ້າພະເຈົ້າຜະນຶກໄວ້ເທິງ
ແຜ່ນດິນໂລກ, ຈະຖືກນຳມາຟ້ອງທ່ານທີ່
[ກ]ບັນລັງພິພາກສາ; ເພາະພຣະຜູ້ເປັນເຈົ້າ
ບັນຊາຂ້າພະເຈົ້າດັ່ງນີ້, ແລະ ຂ້າພະເຈົ້າ
ຕ້ອງເຊື່ອຟັງ. ອາແມນ.

# ໜັງສືຢາໂຄບ

**ນ້ອງຊາຍຂອງນີໄຟ**

ຂໍ້ຄວາມທີ່ເພິ່ນສັ່ງສອນພີ່ນ້ອງຂອງເພິ່ນ. ເພິ່ນເຮັດໃຫ້ຊາຍຄົນໜຶ່ງຊຶ່ງພະຍາຍາມໂຄ່ນລົ້ມຄຳສອນຂອງພຣະຄຣິດຍອມຈຳນົນ. ຂໍ້ຄວາມສັ້ນໆກ່ຽວກັບປະຫວັດສາດຂອງຜູ້ຄົນຂອງນີໄຟ.

ບົດທີ 1

*ຢາໂຄບ ແລະ ໂຢເຊັບພະຍາຍາມຊັກຊວນຄົນທັງປວງໃຫ້ເຊື່ອໃນພຣະຄຣິດ ແລະ ຮັກສາພຣະບັນຍັດຂອງພຣະອົງ—ນີໄຟເສຍຊີວິດ—ຄວາມຊົ່ວຮ້າຍແຜ່ຂະຫຍາຍອອກໄປໃນບັນດາຊາວນີໄຟ. ປະມານ 544–421 ປີກ່ອນ ຄ.ສ.*

1 ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດ
ຂຶ້ນຄື ຫ້າສິບຫ້າປີຜ່ານໄປນັບຕັ້ງແຕ່ເວລາ
ທີ່ລີໄຮໄດ້ໜີຈາກເຢຣູຊາເລັມມາ; ດັ່ງ
ນັ້ນ, ນີໄຟໃຫ້ [ກ]ບັນຍັດໄວ້ກັບຂ້າພະເຈົ້າ
[ຂ]ຢາໂຄບກ່ຽວກັບແຜ່ນຈາລຶກ [ຄ]ນ້ອຍ ຊຶ່ງ
ໃນແຜ່ນຈາລຶກນັ້ນມີເລື່ອງເຫລົ່ານີ້ບັນທຶກ
ໄວ້.
2 ແລະ ນີໄຟໃຫ້ບັນຍັດກັບຂ້າພະເຈົ້າ
ຢາໂຄບວ່າຂ້າພະເຈົ້າ ຄວນບັນທຶກອີກ
ສອງສາມເລື່ອງໄວ້ໃນແຜ່ນຈາລຶກເຫລົ່າ

12 *ກ* ຄມພ ລັດສະໝີພາບຂອງຊັ້ນສູງ.
13 *ກ* ອຊຢ 29:4; 2 ນຟ 26:16.
14 *ກ* ຄມພ ພຣະຄຣິສຕະທຳຄຳພີ.
*ຂ* ຄມພ ພຣະຄຳພີມໍມອນ.
*ຄ* 2 ນຟ 29:11; ອທ 4:8–10.
15 *ກ* ຄມ 1:11.

[ຢາໂຄບ]

**1** 1 *ກ* ຢຄ 7:27.
*ຂ* ຄມພ ຢາໂຄບ, ລູກຊາຍຂອງລີໄຮ.
*ຄ* 2 ນຟ 5:28–33; ຢຄ 3:13–14. ຄມພ ແຜ່ນຈາລຶກ.

ນີ້ ຊຶ່ງຂ້າພະເຈົ້າເຫັນວ່າມັນມີຄຸນຄ່າທີ່ສຸດ;
ວ່າຂ້າພະເຈົ້າບໍ່ຄວນແຕະຕ້ອງນອກຈາກ
ພຽງເລັກໜ້ອຍກ່ຽວກັບປະຫວັດສາດຂອງ
ຜູ້ຄົນພວກນີ້ ຊຶ່ງມີຊື່ວ່າ ຜູ້ຄົນຂອງນີໄຟ.
3 ເພາະເພິ່ນໄດ້ເວົ້າວ່າ ປະຫວັດສາດ
ຂອງຜູ້ຄົນຂອງເພິ່ນຄວນບັນທຶກໄວ້ໃນ
ແຜ່ນຈາລຶກອີກຊຸດໜຶ່ງຂອງເພິ່ນ, ແລະ
ຂ້າພະເຈົ້າຄວນຮັກສາແຜ່ນຈາລຶກເຫລົ່າ
ນີ້ ແລະ ມອບໃຫ້ແກ່ລູກຫລານຂອງຂ້າພະ
ເຈົ້າ, ຈາກລຸ້ນສູ່ລຸ້ນ.
4 ແລະ ຖ້າຫາກມີການສັ່ງສອນອັນສັກ
ສິດ ຫລື ການເປີດເຜີຍອັນຍິ່ງໃຫຍ່ ຫລື
ການທຳນາຍ, ວ່າຂ້າພະເຈົ້າຕ້ອງບັນທຶກ
[ກ]ຫົວຂໍ້ເລື່ອງໄວ້ໃນແຜ່ນຈາລຶກເຫລົ່ານີ້,
ແລະ ບັນທຶກມັນໃຫ້ຫລາຍ ຄືກັບວ່າ ເທົ່າທີ່
ຈະເຮັດໄດ້, ເພື່ອເຫັນແກ່ພຣະຄຣິດ ແລະ
ເພື່ອເຫັນແກ່ຜູ້ຄົນຂອງພວກເຮົາ.
5 ເພາະເປັນຍ້ອນສັດທາ ແລະ ຄວາມ
ກັງວົນອັນໃຫຍ່ຫລວງ, ສິ່ງເຫລົ່ານີ້ຈຶ່ງຖືກ
ສະແດງໃຫ້ປະຈັກແທ້ໆແກ່ພວກເຮົາກ່ຽວ
ກັບຜູ້ຄົນຂອງພວກເຮົາ, ວ່າສິ່ງໃດຈະ
[ກ]ເກີດຂຶ້ນກັບພວກເຂົາ.
6 ແລະ ພວກເຮົາໄດ້ຮັບການເປີດເຜີຍ
ຫລາຍຢ່າງອີກ, ແລະ ມີວິນຍານແຫ່ງການ
ທຳນາຍຫລາຍຢ່າງ; ດັ່ງນັ້ນພວກເຮົາຈຶ່ງຮູ້
ຈັກເລື່ອງຂອງ [ກ]ພຣະຄຣິດ ແລະ ອານາຈັກ
ຂອງພຣະອົງທີ່ຈະມາເຖິງ.
7 ດັ່ງນັ້ນ, ພວກເຮົາຈຶ່ງອອກແຮງງານ
ຢ່າງພາກພຽນໃນບັນດາຜູ້ຄົນຂອງພວກ
ເຮົາ, ເພື່ອພວກເຮົາຈະໄດ້ຊັກຊວນພວກ
ເຂົາໃຫ້ [ກ]ມາຫາພຣະຄຣິດ, ແລະ ມີສ່ວນ
ຮັບພຣະກະລຸນາທິຄຸນຂອງພຣະເຈົ້າ, ເພື່ອ
ພວກເຂົາຈະໄດ້ເຂົ້າໄປໃນ [ຂ]ທີ່ພັກຂອງ
ພຣະອົງ ຍົກເວັ້ນແຕ່ພຣະອົງປະຕິຍານ
ໃນພຣະພິໂລດຂອງພຣະອົງວ່າບໍ່ໃຫ້ພວກ
ເຂົາ [ຄ]ເຂົ້າໄປ ດັ່ງເຊັ່ນພຣະອົງໄດ້ [ງ]ຊຸ່ນ
ເຄືອງໃນວັນແຫ່ງການທົດລອງຂອງລູກ
ຫລານອິດສະຣາເອນຂະນະທີ່ເຂົາເຈົ້າຢູ່
ໃນ [ຈ]ຖິ່ນແຫ້ງແລ້ງກັນດານ.
8 ດັ່ງນັ້ນ, ພວກເຮົາປາດຖະໜາຕໍ່ພຣະ
ເຈົ້າວ່າ ພວກເຮົາຈະຊັກຊວນຄົນທັງປວງ
ບໍ່ໃຫ້ [ກ]ກະບົດຕໍ່ພຣະເຈົ້າທີ່ຈະ [ຂ]ກໍ່ກວນ
ພຣະອົງໃຫ້ພຣະພິໂລດ, ແຕ່ເພື່ອຄົນທັງ
ປວງຈະເຊື່ອໃນພຣະຄຣິດ ແລະ ເຫັນແກ່
ການສິ້ນພຣະຊົນຂອງພຣະອົງ ແລະ ທົນ
ຮັບເອົາ [ຄ]ໄມ້ກາງແຂນຂອງພຣະອົງ ແລະ
ຍອມຮັບເອົາຄວາມອັບອາຍຂາຍໜ້າຂອງ
ໂລກ; ດັ່ງນັ້ນ, ຂ້າພະເຈົ້າຢາໂຄບຈຶ່ງຖືວ່າ
ມັນເປັນໜ້າທີ່ຂອງຂ້າພະເຈົ້າທີ່ຈະເຮັດ
ຕາມບັນຍັດຂອງນີໄຟອ້າຍຂອງຂ້າພະ
ເຈົ້າ.
9 ບັດນີ້ນີໄຟໄດ້ເຖົ້າແກ່ລົງ, ແລະ ເພິ່ນ
ເຫັນວ່າເພິ່ນຈະ [ກ]ຕາຍໄປໃນໄວໆນີ້; ດັ່ງ
ນັ້ນ, ເພິ່ນຈຶ່ງ [ຂ]ເຈີມຊາຍຄົນໜຶ່ງໃຫ້ເປັນ
ກະສັດຄົນຕໍ່ໄປ ແລະ ປົກຄອງຜູ້ຄົນຂອງ
ເພິ່ນຕາມການສືບຄອງລາຊາບັນລັງຂອງ
[ຄ]ກະສັດ.
10 ຜູ້ຄົນມີຄວາມຮັກແພງຕໍ່ນີໄຟຢ່າງ

4 ກ ອສ ສິ່ງທີ່ເດັ່ນ ແລະ ສຳຄັນ.
5 ກ 1 ນຟ 12.
6 ກ 1 ນຟ 10:4–11; 19:8–14.
7 ກ 2 ນຟ 9:41;
ອມນ 1:26;
ມຣນ 10:32.
ຂ ຄມພ ພັກຜ່ອນ.
ຄ ຈບຊ 14:23;
ພບຍ 1:35–37;
ຄພ 84:23–25.
ງ ຮຣ 3:8.
ຈ ຈບຊ 26:65;
1 ນຟ 17:23–31.
8 ກ ຄມພ ກະບົດ, ການກະບົດ.
ຂ 1 ນຟ 17:30;
ແອວ 12:36–37;
ຣລມ 7:18.
ຄ ປຈສ ມທ 16:25–26
(ພາກທ້ອຍທ້າຍ);
ລກ 14:27.
9 ກ 2 ນຟ 1:14.
ຂ ຄມພ ເຈີມ, ການເຈີມ.
ຄ 2 ນຟ 6:2;
ຈຣ 1:7.

ເຫລືອລົ້ນ, ເພາະເພິ່ນເປັນຜູ້ປົກປັກຮັກສາ
ທີ່ຍິ່ງໃຫຍ່ຂອງພວກເຂົາ, ໂດຍທີ່ປັດປ່າຍ
[ກ]ດາບຂອງລາບານເພື່ອປ້ອງກັນພວກເຂົາ,
ແລະ ໂດຍການອອກແຮງງານຕະຫລອດ
ວັນເວລາຂອງເພິ່ນເພື່ອຄວາມຜາສຸກຂອງ
ພວກເຂົາ—
11 ດັ່ງນັ້ນ, ຜູ້ຄົນຈຶ່ງປາດຖະໜາຈະເກັບ
ກຳຊື່ຂອງເພິ່ນໄວ້ໃນຄວາມຊົງຈຳ. ແລະ ຜູ້
ໃດທີ່ຈະຂຶ້ນປົກຄອງແທນເພິ່ນ, ຜູ້ຄົນກໍຈະ
ເອີ້ນວ່ານີໄຟທີສອງ, ນີໄຟທີສາມ, ແລະ
ຕໍ່ໆກັນໄປຕາມການສືບຄອງລາຊາບັນລັງ
ຂອງກະສັດ; ແລະ ຜູ້ຄົນເອີ້ນກະສັດວ່າ
ແນວນີ້ ເຖິງວ່າຈະມີຊື່ອັນອື່ນກໍຕາມ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ນີໄຟໄດ້ສິ້ນຊີວິດ.
13 ບັດນີ້ຜູ້ຄົນຊຶ່ງບໍ່ແມ່ນ [ກ]ຊາວເລມັນ
ກໍເປັນ [ຂ]ຊາວນີໄຟ; ເຖິງຢ່າງໃດກໍຕາມ,
ພວກເຂົາຍັງຖືກເອີ້ນວ່າ ຊາວນີໄຟ, ຊາວ
ຢາໂຄບ, ຊາວໂຢເຊັບ, [ຄ]ຊາວໂຊຣຳ, ຊາວ
ເລມັນ, ຊາວເລມູເອນ, ແລະ ຊາວອິດຊະ
ມາເອນ.
14 ແຕ່ວ່າຂ້າພະເຈົ້າຢາໂຄບຈະບໍ່ແບ່ງ
ແຍກພວກເຂົາຕາມຊື່ເຫລົ່ານີ້, ແຕ່ຂ້າພະ
ເຈົ້າຈະ [ກ]ເອີ້ນພວກທີ່ພະຍາຍາມປອງ
ຮ້າຍຜູ້ຄົນຂອງນີໄຟວ່າ ຊາວເລມັນ, ສ່ວນ
ຄົນທີ່ເປັນເພື່ອນມິດກັບນີໄຟ, ຂ້າພະເຈົ້າ
ຈະເອີ້ນວ່າ [ຂ]ຊາວນີໄຟ, ຫລື [ຄ]ຜູ້ຄົນຂອງ
ນີໄຟຕາມການສືບຄອງລາຊາບັນລັງຂອງ
ກະສັດ.
15 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຜູ້ຄົນຂອງນີໄຟພາຍໃຕ້ການປົກຄອງ
ຂອງກະສັດອົງທີສອງເລີ່ມມີໃຈແຂງກະ
ດ້າງ, ແລະ ຍອມຕົນເຮັດຄວາມຊົ່ວຮ້າຍ
ບາງຢ່າງເໝືອນກັນກັບດາວິດໃນສະໄໝ
ກ່ອນທີ່ຢາກມີ [ກ]ມະເຫສີ ແລະ ນາງສະໜົມ
ຫລາຍຄົນ, ແລະ ໂຊໂລໂມນລູກຊາຍຂອງ
ເພິ່ນກໍເໝືອນກັນ.
16 ແທ້ຈິງແລ້ວ, ພວກເຂົາເລີ່ມຕົ້ນ
ສະແຫວງຫາຄຳ ແລະ ເງິນເປັນຈຳນວນ
ຫລວງຫລາຍ, ແລະ ເລີ່ມຕົ້ນເພີ້ຝັນດ້ວຍ
ຄວາມທະນົງຕົວ.
17 ດັ່ງນັ້ນຂ້າພະເຈົ້າຢາໂຄບຈຶ່ງໃຫ້ຂໍ້
ຄວາມເຫລົ່ານີ້ແກ່ພວກເຂົາໃນຂະນະທີ່
ຂ້າພະເຈົ້າສິດສອນພວກເຂົາໃນ [ກ]ພຣະ
ວິຫານ, ໂດຍທີ່ຂ້າພະເຈົ້າໄດ້ຮັບ [ຂ]ວຽກ
ງານຂອງຂ້າພະເຈົ້າຈາກພຣະຜູ້ເປັນເຈົ້າ
ແລ້ວ.
18 ເພາະວ່າຂ້າພະເຈົ້າຢາໂຄບ ແລະ
ໂຢເຊັບນ້ອງຊາຍຂອງຂ້າພະເຈົ້າ [ກ]ໄດ້ຮັບ
ການແຕ່ງຕັ້ງໂດຍມືຂອງນີໄຟໃຫ້ເປັນປະ
ໂລຫິດ ແລະ ຜູ້ສອນຜູ້ຄົນພວກນີ້.
19 ແລະ ພວກເຮົາໄດ້ຂະຫຍາຍ [ກ]ໜ້າ
ທີ່ຂອງພວກເຮົາແດ່ພຣະຜູ້ເປັນເຈົ້າ,
ພວກເຮົາຕ້ອງມີ [ຂ]ຄວາມຮັບຜິດຊອບ
ຮັບເອົາບາບຂອງຜູ້ຄົນໄວ້ເທິງຫົວຂອງ
ພວກເຮົາເອງ ຖ້າຫາກພວກເຮົາບໍ່ສິດ
ສອນພຣະຄຳຂອງພຣະເຈົ້າໃຫ້ພວກເຂົາ
ດ້ວຍຄວາມພາກພຽນຢ່າງເຕັມທີ່; ດັ່ງນັ້ນ

10 ກ 1 ນຟ 4:9; 2 ນຟ 5:14; ຄມ 1:13; ມຊຢ 1:16; ຄພ 17:1.
13 ກ ອນ 1:13; ຄພ 3:18.
ຂ ຄມພ ຊາວນີໄຟ.
ຄ 1 ນຟ 4:35; 4 ນຟ 1:36–37.
14 ກ ມຊຢ 25:12; ແອວ 2:11.
ຂ 2 ນຟ 4:11.
ຄ 2 ນຟ 5:9.
15 ກ ຄພ 132:38–39.
17 ກ 2 ນຟ 5:16. ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
ຂ ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
18 ກ 2 ນຟ 5:26.
19 ກ ຄມພ ຕຳແໜ່ງ, ເຈົ້າໜ້າທີ່.
ຂ ຄພ 107:99–100. ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.

ໂດຍການອອກແຮງງານດ້ວຍກຳລັງຂອງ
ພວກເຮົາ [ຄ]ເລືອດຂອງພວກເຂົາຈະບໍ່ມາ
ເປື້ອນອາພອນຂອງພວກເຮົາ; ຖ້າບໍ່ດັ່ງນັ້ນ
ເລືອດຂອງພວກເຂົາຈະເປິເປື້ອນອາພອນ
ຂອງພວກເຮົາ, ແລະ ຈະເຫັນວ່າພວກເຮົາ
ບໍ່ປາດສະຈາກມົນທິນໃນວັນສຸດທ້າຍ.

## ບົດທີ 2

*ຢາໂຄບກ່າວໂທດການໄຝ່ຝັນຫາຄວາມຮັ່ງມີ, ຄວາມທະນົງຕົວ, ແລະ ຄວາມມີຈິດໃຈລາມົກ—ມະນຸດຄວນສະແຫວງຫາຄວາມຮັ່ງມີເພື່ອຊ່ວຍເຫລືອເພື່ອນມະນຸດຂອງເຂົາ—ພຣະຜູ້ເປັນເຈົ້າບັນຊາບໍ່ໃຫ້ຜູ້ຊາຍໃນບັນດາຊາວນີໄຟມີເມຍຫລາຍກວ່າໜຶ່ງຄົນ—ພຣະຜູ້ເປັນເຈົ້າຊື່ນຊົມໃນພົມມະຈັນຂອງຜູ້ຍິງ. ປະມານ 544–421 ປີກ່ອນ ຄ.ສ.*

1 ນີ້ຄືຂໍ້ຄວາມຊຶ່ງຢາໂຄບນ້ອງຊາຍຂອງ
ນີໄຟໄດ້ເວົ້າກັບຜູ້ຄົນຂອງນີໄຟຫລັງຈາກ
ນີໄຟໄດ້ສິ້ນຊີວິດໄປແລ້ວ:

2 ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຂ້າພະເຈົ້າຢາໂຄບຕາມຄວາມຮັບ
ຜິດຊອບຊຶ່ງຂ້າພະເຈົ້າມີຢູ່ພາຍໃຕ້ພຣະ
ເຈົ້າ, ຂ້າພະເຈົ້າຈະຂະຫຍາຍໜ້າທີ່ຂອງ
ຂ້າພະເຈົ້າດ້ວຍສະຕິປັນຍາ, ແລະ ເພື່ອ
ຂ້າພະເຈົ້າຈະກຳຈັດບາບຂອງພວກທ່ານ
ອອກຈາກອາພອນຂອງຂ້າພະເຈົ້າ, ຂ້າ
ພະເຈົ້າຈຶ່ງຂຶ້ນມາພຣະວິຫານໃນມື້ນີ້ ເພື່ອ
ຈະໄດ້ປະກາດພຣະຄຳຂອງພຣະເຈົ້າແກ່
ພວກທ່ານ.

3 ແລະ ຕົວພວກທ່ານເອງຮູ້ຈັກແລ້ວ ຕັ້ງ
ແຕ່ຕົ້ນມາຂ້າພະເຈົ້າໄດ້ເຮັດໜ້າທີ່ຂອງຂ້າ
ພະເຈົ້າຢ່າງພາກພຽນຕາມທີ່ຂ້າພະເຈົ້າໄດ້
ຖືກຮຽກຮ້ອງໃຫ້ເຮັດ; ແຕ່ມື້ນີ້ຂ້າພະເຈົ້າ
ຖືກຖ່ວງດຶງດ້ວຍຄວາມປາດຖະໜາ ແລະ
ຄວາມກະວົນກະວາຍເພື່ອຄວາມຜາສຸກ
ຂອງຈິດວິນຍານຂອງພວກທ່ານຍິ່ງກວ່າ
ຂ້າພະເຈົ້າເຄີຍມີມາກ່ອນ.

4 ເພາະຈົ່ງເບິ່ງ, ຈົນມາເຖິງບັດນີ້ພວກ
ທ່ານໄດ້ເຊື່ອຟັງພຣະຄຳຂອງພຣະຜູ້ເປັນ
ເຈົ້າ, ຊຶ່ງຂ້າພະເຈົ້າໄດ້ໃຫ້ໄວ້ກັບພວກ
ທ່ານ.

5 ແຕ່ ຈົ່ງ ເບິ່ງ, ພວກ ທ່ານ ຈົ່ງ ເຊື່ອ ຟັງ
ຂ້າພະເຈົ້າ ແລະ ຈົ່ງຮູ້ໄວ້ວ່າ ໂດຍຄວາມ
ຊ່ວຍ ເຫລືອ ຂອງ ພຣະ ຜູ້ ສ້າງ ສະ ຫວັນ
ແລະ ແຜ່ນດິນໂລກ ຜູ້ມີອຳນາດທັງປວງ,
ຂ້າພະເຈົ້າຈະບອກພວກທ່ານໄວ້ກ່ຽວກັບ
[ກ]ຄວາມນຶກຄິດຂອງພວກທ່ານວ່າ, ພວກ
ທ່ານເລີ່ມຕົ້ນອອກແຮງງານໃນບາບ, ເບິ່ງ
ແລ້ວບາບນັ້ນເປັນໜ້າກຽດຊັງທີ່ສຸດສຳລັບ
ຂ້າພະເຈົ້າ, ແທ້ຈິງແລ້ວ, ເປັນໜ້າກຽດຊັງ
ທີ່ສຸດຕໍ່ພຣະເຈົ້າ.

6 ແທ້ຈິງແລ້ວ, ມັນເຮັດໃຫ້ຈິດວິນຍານ
ຂອງຂ້າພະເຈົ້າໂສກເສົ້າ ແລະ ເຮັດໃຫ້
ຂ້າພະເຈົ້າກົ້ມໜ້າຢູ່ດ້ວຍຄວາມອັບອາຍຕໍ່
ໜ້າທີ່ປະທັບຂອງພຣະຜູ້ສ້າງຂອງຂ້າພະ
ເຈົ້າ, ເພາະຂ້າພະເຈົ້າຈະໄດ້ໃຫ້ຖ້ອຍຄຳ
ແກ່ພວກທ່ານກ່ຽວກັບຄວາມຊົ່ວຮ້າຍຂອງ
ໃຈພວກທ່ານ.

7 ແລະ ມັນເຮັດໃຫ້ຂ້າພະເຈົ້າໂສກເສົ້າ
ອີກທີ່ຈະຕ້ອງໃຊ້ຄຳເວົ້າ [ກ]ຮຸນແຮງນຳພວກ
ທ່ານຢູ່ຕໍ່ໜ້າເມຍຂອງພວກທ່ານ ແລະ
ລູກຂອງພວກທ່ານ ຜູ້ຊຶ່ງຄວາມຮູ້ສຶກຂອງ
ພວກເຂົາຫລາຍຄົນອ່ອນນ້ອມ ແລະ [ຂ]ບໍ
ລິສຸດ ແລະ ລະມຸນລະໄມຕໍ່ພຣະພັກຂອງ

19 *ຄ* 2 ນຟ 9:44.
**2** 5 *ກ* ແອວ 12:3;
ຄພ 6:16.
ຄມພ ພຣະເຈົ້າ,
ຝ່າຍພຣະເຈົ້າ.
7 *ກ* ຄພ 121:43.
*ຂ* ຄມພ ຄຸນນະທຳ.

ພຣະເຈົ້າ, ຊຶ່ງເປັນສິ່ງທີ່ພໍພຣະໄທຕໍ່ພຣະ
ເຈົ້າ;
8 ແລະ ຂ້າພະເຈົ້າຄິດວ່າ ພວກເຂົາຂຶ້ນ
ມາບ່ອນນີ້ ເພື່ອຈະໄດ້ຍິນພຣະຄຳທີ່ໜ້າ
ພໍໃຈຈາກພຣະເຈົ້າ, ແທ້ຈິງແລ້ວ, ແມ່ນ
[ກ]ພຣະຄຳຂອງພຣະເຈົ້າ ຊຶ່ງປິ່ນປົວຈິດວິນ
ຍານທີ່ຖືກບາດເຈັບ.
9 ດັ່ງນັ້ນ, ມັນຈຶ່ງເປັນພາລະແບກຫາບຕໍ່
ຈິດວິນຍານຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າ
ຖືກບັງຄັບ ເພາະພຣະບັນຍັດອັນເຄັ່ງຄັດ
ຊຶ່ງຂ້າພະເຈົ້າໄດ້ຮັບມາຈາກພຣະເຈົ້າ ໃຫ້
ຕັກເຕືອນພວກທ່ານຕາມຄວາມຜິດຂອງ
ພວກທ່ານ ແລະ ເຮັດໃຫ້ບາດແຜຂອງຜູ້
ທີ່ໄດ້ຮັບບາດເຈັບກວ້າງອອກແທນທີ່ຈະ
ປອບໂຍນ ແລະ ປິ່ນປົວບາດແຜໃຫ້ພວກ
ເຂົາ; ແລະ ຄົນທີ່ບໍ່ໄດ້ຮັບບາດເຈັບນັ້ນ,
ແທນທີ່ຈະຊື່ນຊົມຢູ່ດ້ວຍພຣະຄຳຂອງ
ພຣະເຈົ້າທີ່ໜ້າພໍໃຈ ກໍມີດາບສອງຄົມມາ
ວາງໄວ້ເພື່ອສຽບແທງຈິດວິນຍານຂອງ
ພວກເຂົາ ແລະ ເຮັດໃຫ້ຈິດໃຈອັນອ່ອນ
ນ້ອມຂອງພວກເຂົາໄດ້ຮັບບາດເຈັບ.
10 ແຕ່ທັງທີ່ເປັນວຽກງານໜັກຢ່າງໃຫຍ່
ຫລວງ, ຂ້າພະເຈົ້າກໍຕ້ອງເຮັດຕາມ [ກ]ຄຳ
ສັ່ງອັນເຄັ່ງຄັດຂອງພຣະເຈົ້າ, ແລະ ບອກ
ພວກທ່ານໃຫ້ຮູ້ກ່ຽວກັບຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງພວກທ່ານ
ຕໍ່ໜ້າຜູ້ທີ່ມີໃຈບໍລິສຸດ, ແລະ ຄົນທີ່ມີໃຈທີ່
ຊອກຊ້ຳພາຍໃຕ້ການເຫລືອດພຣະເນດ
ອັນ [ຂ]ແຫລມຄົມຂອງພຣະເຈົ້າຜູ້ຊົງລິດ
ອຳນາດຍິ່ງໃຫຍ່.
11 ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເວົ້າກັບພວກ
ທ່ານດ້ວຍຄວາມຈິງ [ກ]ແຈ່ມແຈ້ງແຫ່ງພຣະ
ຄຳຂອງພຣະເຈົ້າ. ເພາະຈົ່ງເບິ່ງ, ໃນ
ຂະນະທີ່ຂ້າພະເຈົ້າທູນຖາມພຣະຜູ້ເປັນ
ເຈົ້າຢູ່ນັ້ນ, ພຣະຄຳຂອງພຣະອົງໄດ້ມາຫາ
ຂ້າພະເຈົ້າ, ມີຄວາມວ່າ: ຢາໂຄບເຈົ້າຈົ່ງ
ໄປຍັງພຣະວິຫານໃນມື້ອື່ນນີ້, ແລະ ປະ
ກາດພຣະຄຳຊຶ່ງເຮົາຈະມອບໃຫ້ແກ່ເຈົ້າ
ເພື່ອເຈົ້າຈະໄດ້ກ່າວຕໍ່ຜູ້ຄົນພວກນີ້.
12 ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງຂອງຂ້າ
ພະເຈົ້າ, ນີ້ແມ່ນພຣະຄຳຊຶ່ງຂ້າພະເຈົ້າ
ຈະປະກາດແກ່ພວກທ່ານ, ຊຶ່ງພວກທ່ານ
ຫລາຍຄົນກຳລັງຄົ້ນຫາຄຳ, ແລະ ເງິນ,
ແລະ [ກ]ວັດຖຸນາໆຊະນິດ, ຊຶ່ງມີຢ່າງຫລວງ
ຫລາຍເຕັມໄປດ້ວຍຄວາມອຸດົມສົມບູນທົ່ວ
ແຜ່ນດິນ, ອັນເປັນ [ຂ]ແຜ່ນດິນແຫ່ງຄຳສັນ
ຍາສຳລັບພວກທ່ານ ແລະ ລູກຫລານຂອງ
ພວກທ່ານ.
13 ແລະ ພຣະຫັດແຫ່ງອາລັກຂາໄດ້ຍິ້ມ
ຢູ່ເທິງພວກທ່ານຢ່າງພໍພຣະໄທທີ່ສຸດ, ຈົນ
ວ່າພວກທ່ານໄດ້ຂອງມີຄ່າຫລວງຫລາຍ;
ແລະ ເພາະວ່າບາງຄົນໃນບັນດາພວກ
ທ່ານໄດ້ຮັບຫລາຍກວ່າພີ່ນ້ອງຂອງພວກ
ທ່ານ ແລ້ວພວກທ່ານຈຶ່ງຄິດ [ກ]ລະເມີເພີ້ຝັນ
ດ້ວຍຄວາມທະນົງໃຈຫລາຍ ແລະ ເຮັດຄໍ
ແຂງ ແລະ ອວດອ້າງ ຍ້ອນວ່າເຄື່ອງນຸ່ງລາ
ຄາແພງຂອງພວກທ່ານ, ແລະ ໄດ້ຂົ່ມເຫັງ
ພີ່ນ້ອງຂອງພວກທ່ານ ເພາະພວກທ່ານຄິດ
ວ່າພວກທ່ານດີກວ່າພວກເຂົາ.
14 ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ,
ພວກທ່ານຄິດວ່າພຣະເຈົ້າຮັບຮອງສິ່ງນີ້
ເພື່ອພວກທ່ານບໍ? ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ວ່າ, ບໍ່ເລີຍ. ແຕ່ພຣະອົງຈະກ່າວໂທດພວກ
ທ່ານ, ແລະ ຖ້າຫາກພວກທ່ານຍັງສືບຕໍ່

8 ກ ແອວ 31:5.
10 ກ ຄມພ ພຣະບັນຍັດຂອງພຣະເຈົ້າ.
ຂ 2 ນຟ 9:44.
11 ກ 2 ນຟ 25:4; 31:2–3.
12 ກ 1 ນຟ 18:25; ຣລມ 6:9–11; ອທ 10:23.
ຂ 1 ນຟ 2:20. ຄມພ ແຜ່ນດິນແຫ່ງຄຳສັນຍາ.
13 ກ ມມ 8:35–39.

ເຮັດສິ່ງເຫລົ່ານີ້ຢູ່ ການພິພາກສາຂອງພຣະອົງຈະຕ້ອງມາສູ່ພວກທ່ານຢ່າງວ່ອງໄວ.

15 ໂອ້ ຂໍໃຫ້ພຣະອົງສະແດງແກ່ພວກທ່ານວ່າ ພຣະອົງສາມາດສຽບແທງພວກທ່ານໄດ້ ແລະ ໂດຍການເຫລືອດສາຍພຣະເນດຂອງພຣະອົງຂ້າງດຽວ ພຣະອົງກໍລົງທັບພວກທ່ານໃຫ້ເປັນຝຸ່ນໄດ້!

16 ໂອ້ ຂໍໃຫ້ພຣະອົງຈົ່ງເອົາພວກທ່ານອອກຈາກຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງອັນນີ້ເຖີດ ແລະ ຂໍໃຫ້ພວກທ່ານຈົ່ງຟັງພຣະບັນຊາຂອງພຣະອົງ ແລະ ຢ່າໄດ້ໃຫ້ [ກ]ຄວາມທະນົງໃຈອັນນີ້ມາທຳລາຍຈິດວິນຍານຂອງພວກທ່ານເລີຍ!

17 ຈົ່ງຄິດວ່າ ພີ່ນ້ອງຂອງພວກທ່ານກໍເໝືອນກັນກັບຕົວຂອງພວກທ່ານເອງ, ແລະ ຄຸ້ນເຄີຍກັບທຸກຄົນ ແລະ ແຈກຢາຍ [ກ]ເຂົ້າຂອງ ຂອງພວກທ່ານ, ເພື່ອ [ຂ]ພວກເຂົາຈະໄດ້ຮັ່ງມີເໝືອນດັ່ງພວກທ່ານ.

18 ແຕ່ວ່າກ່ອນທີ່ພວກທ່ານຈະຊອກຫາ [ກ]ຄວາມຮັ່ງມີນັ້ນ, ໃຫ້ພວກທ່ານຊອກຫາ [ຂ]ອານາຈັກຂອງພຣະເຈົ້າກ່ອນ.

19 ແລະ ຫລັງຈາກພວກທ່ານໄດ້ຮັບຄວາມຫວັງໃນພຣະຄຣິດແລ້ວ ພວກທ່ານຈະໄດ້ຮັບຄວາມຮັ່ງມີ, ຖ້າຫາກພວກທ່ານສະແຫວງຫາມັນ, ແລະ ພວກທ່ານຊອກຫາມັນດ້ວຍເຈດຕະນາເພື່ອ [ກ]ສ້າງຄວາມດີ—ເພື່ອມີເຄື່ອງນຸ່ງຫົ່ມໃຫ້ແກ່ຄົນທີ່ເປືອຍເປົ່າ, ແລະ ລ້ຽງຄົນອຶດຫິວ, ແລະ ປົດປ່ອຍຊະເລີຍໃຫ້ເປັນອິດສະລະ ແລະ ຊ່ວຍບັນເທົາທຸກໃຫ້ຄົນເຈັບປ່ວຍ ແລະ ຄົນທີ່ເປັນທຸກ.

20 ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້ເວົ້າກັບພວກທ່ານແລ້ວກ່ຽວກັບຄວາມທະນົງໃຈນັ້ນ; ແລະ ຄົນໃນຈຳນວນພວກທ່ານທີ່ເຮັດໃຫ້ເພື່ອນບ້ານຂອງພວກທ່ານເປັນທຸກ ແລະ ຂົ່ມເຫັງເຂົາເພາະຄວາມອວດດີໃນໃຈຂອງພວກທ່ານ, ດ້ວຍສິ່ງທີ່ພຣະເຈົ້າປະທານໃຫ້ແກ່ພວກທ່ານ, ແລ້ວພວກທ່ານຈະເວົ້າວ່າແນວໃດ?

21 ພວກທ່ານບໍ່ຄິດບໍວ່າ ເລື່ອງເຫລົ່ານີ້ເປັນໜ້າກຽດຊັງສຳລັບພຣະອົງຜູ້ສ້າງເນື້ອໜັງທັງປວງ? ແລະ ໃນສາຍພຣະເນດຂອງພຣະອົງແລ້ວ ຄົນຜູ້ໜຶ່ງກໍມີຄຸນຄ່າຊ່ຳກັບຄົນອີກຜູ້ໜຶ່ງ. ແລະ ເນື້ອໜັງທັງໝົດນັ້ນມາຈາກຂີ້ຝຸ່ນ; ແລະ ພຣະອົງໄດ້ສ້າງພວກເຂົາເພື່ອຈຸດມຸ້ງໝາຍອັນດຽວກັນ, ວ່າພວກເຂົາຄວນຮັກສາ [ກ]ພຣະບັນຍັດຂອງພຣະອົງ ແລະ ຖວາຍບາລະມີແດ່ພຣະອົງຕະຫລອດໄປ.

22 ແລະ ບັດນີ້ຂ້າພະເຈົ້າຂໍຈົບການເວົ້າກັບພວກທ່ານກ່ຽວກັບຄວາມທະນົງໃຈນີ້. ແລະ ຖ້າວ່າຂ້າພະເຈົ້າບໍ່ຈຳເປັນຈະເວົ້າກ່ຽວກັບຄວາມຜິດອັນຫຍາບຄາຍນີ້, ໃຈຂອງຂ້າພະເຈົ້າຄົງປິຕິຍິນດີຢ່າງຍິ່ງເພາະພວກທ່ານ.

23 ແຕ່ວ່າພຣະຄຳຂອງພຣະເຈົ້າເຮັດໃຫ້ຂ້າພະເຈົ້າຕ້ອງໜັກໃຈເພາະຄວາມຜິດອັນຫຍາບຊ້າຂອງພວກທ່ານ. ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ຜູ້ຄົນພວກນີ້ເລີ່ມສ້າງຄວາມຊົ່ວຮ້າຍ; ພວກເຂົາບໍ່ເຂົ້າໃຈພຣະຄຳພີ, ແລະ ພະຍາຍາມຊອກຫາຂໍ້ແກ້ຕົວໃນການທຳການໂສເພນີ,

16 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
17 *ກ* ຄມພ ຄວາມຜາສຸກ; ໃຫ້ທານ, ການໃຫ້ທານ.
*ຂ* 4 ນຟ 1:3.
18 *ກ* 1 ກສ 3:11–13; ມຣກ 10:17–27; 2 ນຟ 26:31; ຄພ 6:7. ຄມພ ຮັ່ງມີ, ຄວາມຮັ່ງມີ.
*ຂ* ລກ 12:22–31.
19 *ກ* ມຊຢ 4:26.
21 *ກ* ຄພ 11:20; ອຣຣ 3:25–26.

ເພາະເລື່ອງນີ້ໄດ້ບັນທຶກໄວ້ກ່ຽວກັບກະສັດ
ດາວິດ ແລະ ໂຊໂລໂມນລູກຊາຍຂອງເຂົາ.
24 ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, ຈົ່ງເບິ່ງ,
ດາວິດ ແລະ [ກ]ໂຊໂລໂມນມີ [ຂ]ເມຍກັບສາວ
ໃຊ້ຢ່າງຫລວງຫລາຍ, ຊຶ່ງເລື່ອງນີ້ເປັນໜ້າ
ກຽດຊັງຕໍ່ໜ້າເຮົາ.
25 ດັ່ງນັ້ນ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງ
ນີ້, ເຮົາພາຜູ້ຄົນພວກນີ້ອອກຈາກແຜ່ນດິນ
ເຢຣູຊາເລັມດ້ວຍອຳນາດຂອງແຂນເຮົາ
ເອງ, ເພື່ອເຮົາຈະໄດ້ຍົກກິ່ງງ່າ [ກ]ອັນຊອບ
ທຳຂຶ້ນຈາກໜໍ່ແໜງຂອງໂຢເຊັບໄວ້ໃຫ້
ເຮົາ.
26 ດັ່ງນັ້ນ, ເຮົາອົງພຣະຜູ້ເປັນເຈົ້າຈະບໍ່
ຍອມໃຫ້ຜູ້ຄົນພວກນີ້ໄດ້ຮັບຄວາມທຸກທໍ
ລະມານເໝືອນດັ່ງຄົນໃນສະໄໝກ່ອນ.
27 ດັ່ງນັ້ນ, ພີ່ນ້ອງຂອງຂ້າພະເຈົ້າ, ຈົ່ງ
ຟັງ, ແລະ ຈົ່ງເຊື່ອຟັງພຣະຄຳຂອງພຣະຜູ້
ເປັນເຈົ້າວ່າ: ຈະບໍ່ມີຜູ້ຊາຍຄົນໃດໃນບັນ
ດາພວກທ່ານມີເມຍຫລາຍກວ່າ [ກ]ໜຶ່ງຄົນ;
ແລະ ມີເມຍນ້ອຍອີກບໍ່ໄດ້;
28 ເພາະເຮົາ, ອົງພຣະຜູ້ເປັນເຈົ້າ, ຊື່ນ
ຊົມໃນ [ກ]ພົມມະຈັນຂອງຜູ້ຍິງ. ແລະ ສ່ວນ
ການໂສເພນີນັ້ນ ເປັນສິ່ງທີ່ໜ້າກຽດຊັງຕໍ່
ໜ້າເຮົາ; ຈອມໂຍທາໄດ້ກ່າວດັ່ງນີ້.
29 ດັ່ງນັ້ນ, ຜູ້ຄົນພວກນີ້ຈະຕ້ອງຮັກສາ
ບັນຍັດຂອງເຮົາ, ຈອມໂຍທາໄດ້ກ່າວດັ່ງ
ນີ້, ຖ້າບໍ່ດັ່ງນັ້ນແຜ່ນດິນຈະຖືກ [ກ]ສາບແຊ່ງ
ສຳລັບພວກເຂົາ.
30 ຈອມໂຍທາໄດ້ກ່າວວ່າ, ຖ້າເຮົາຢາກ
ຈະລ້ຽງດູ [ກ]ລູກຫລານໄວ້ເພື່ອເຮົາ ແລ້ວ
ເຮົາຈະບັນຊາຜູ້ຄົນຂອງເຮົາເອງ; ບໍ່ດັ່ງນັ້ນ
ພວກເຂົາຈະເຊື່ອຟັງເລື່ອງເຫລົ່ານີ້.
31 ເພາະຈົ່ງເບິ່ງ, ເຮົາພຣະຜູ້ເປັນເຈົ້າ
ໄດ້ເຫັນຄວາມເສົ້າສະຫລົດໃຈ, ແລະ ໄດ້
ຍິນສຽງທຸກໂສກຂອງລູກສາວຂອງຜູ້ຄົນ
ຂອງເຮົາໃນແຜ່ນດິນເຢຣູຊາເລັມ, ແທ້ຈິງ
ແລ້ວ, ໃນທົ່ວແຜ່ນດິນຂອງຜູ້ຄົນຂອງເຮົາ,
ເພາະຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດ
ຊັງຂອງຜົວຂອງພວກເຂົາ.
32 ແລະ ຈອມໂຍທາໄດ້ກ່າວໄວ້ວ່າ ເຮົາ
ຈະບໍ່ຍອມໃຫ້ສຽງຮ້ອງໄຫ້ຂອງລູກສາວທີ່
ດີຂອງຜູ້ຄົນພວກນີ້ຊຶ່ງເຮົາໄດ້ນຳອອກມາ
ຈາກແຜ່ນດິນເຢຣູຊາເລັມຂຶ້ນມາເຖິງເຮົາ
ເພື່ອຟ້ອງຜົວຂອງພວກເຂົາ, ຈອມໂຍທາ
ໄດ້ກ່າວ.
33 ເພາະ ພວກ ເຂົາ ຈະ ບໍ່ ນຳ ເອົາ ລູກ
ສາວຂອງຜູ້ຄົນຂອງເຮົາໄປເປັນຊະເລີຍ
ເພາະຄວາມອ່ອນໂຍນຂອງນາງ ຖ້າຫາກ
ເປັນດັ່ງນັ້ນ, ເຮົາຈະມາຢ້ຽມຢາມພວກ
ເຂົາດ້ວຍການສາບແຊ່ງຢ່າງສາຫັດ, ຈົນ
ເຖິງການທຳລາຍ; ເພື່ອພວກເຂົາຈະບໍ່ທຳ
[ກ]ການໂສເພນີເໝືອນດັ່ງຄົນໃນສະໄໝ
ກ່ອນ, ຈອມໂຍທາໄດ້ກ່າວ.
34 ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງຂອງຂ້າ
ພະເຈົ້າ, ພວກທ່ານຮູ້ແລ້ວວ່າ ພຣະບັນ
ຍັດເຫລົ່ານີ້ໄດ້ປະທານໃຫ້ບິດາຂອງພວກ
ເຮົາລີໄຮ; ດັ່ງນັ້ນພວກທ່ານໄດ້ຮູ້ມາແລ້ວ;
ແລະ ພວກທ່ານໄດ້ເຂົ້າມາສູ່ການກ່າວ
ໂທດອັນໃຫຍ່ຫລວງເພາະສິ່ງເຫລົ່ານີ້ທີ່
ພວກທ່ານບໍ່ຄວນເຮັດເລີຍ.

24 ກ 1 ກສ 11:1;
ນມຢ 13:25–27.
ຂ 1 ກສ 11:1–3;
ອຊຣ 9:1–2;
ຄພ 132:38–39.
25 ກ ປຖກ 49:22–26;
ອມ 5:15;
2 ນຟ 3:5;
ແອວ 26:36.
ຄມພ ລີໄຮ, ບິດາຂອງນີໄຟ.
27 ກ ຄພ 42:22; 49:16.
ຄມພ ແຕ່ງງານ,
ການແຕ່ງງານ.
28 ກ ຄມພ ພົມມະຈັນ.
29 ກ ອທ 2:8–12.
30 ກ ມລກ 2:15;
ຄພ 132:61–66.
33 ກ ຄມພ ການຂາດສິນທຳທາງ
ເພດ;
ຕັນຫາໜ້າມືດ,
ຄວາມຕັນຫາໜ້າມືດ.

35 ຈົ່ງ ເບິ່ງ, ພວກ ທ່ານ ເຮັດ ຄວາມ ຊົ່ວ
ຮ້າຍ [ກ]ອັນໃຫຍ່ຫລວງກວ່າ ຊາວ ເລມັນ ພີ່
ນ້ອງຂອງພວກເຮົາ. ພວກທ່ານໄດ້ເຮັດໃຫ້
ໃຈອັນອ່ອນໂຍນຂອງເມຍຂອງພວກທ່ານ
ເຈັບຊ້ຳ, ແລະ ເຮັດໃຫ້ລູກຫລານຂອງ
ພວກທ່ານໝົດຄວາມໝັ້ນໃຈໃນພວກທ່ານ
ຍ້ອນຕົວຢ່າງອັນຊົ່ວຮ້າຍທີ່ພວກທ່ານໄດ້
ເຮັດຕໍ່ໜ້າພວກເຂົາ. ແລະ ສຽງສະອື້ນ
ຂອງໃຈຂອງພວກເຂົາຂຶ້ນໄປເຖິງພຣະເຈົ້າ
ເພື່ອຟ້ອງພວກທ່ານ. ແລະ ເພາະຄວາມ
ເຄັ່ງຄັດແຫ່ງພຣະຄຳຂອງພຣະເຈົ້າຊຶ່ງມາ
ລົງທັບພວກທ່ານ, ໃຈຫລາຍດວງຈຶ່ງຕາຍ
ໂດຍການຖືກສຽບແທງເປັນແຜເລິກ.

## ບົດທີ 3

*ຜູ້ທີ່ມີໃຈບໍລິສຸດຮັບພຣະຄຳອັນໜ້າພໍໃຈ ຂອງພຣະເຈົ້າ—ຊາວເລມັນຊອບທຳກວ່າ ຊາວນີໄຟ—ຢາໂຄບເຕືອນຕໍ່ຕ້ານການ ລ່ວງປະເວນີ, ກິເລດຕັນຫາ, ແລະ ບາບ ທຸກຢ່າງ. ປະມານ 544–421 ປີ ກ່ອນ ຄ.ສ.*

1 ແຕ່ຈົ່ງເບິ່ງ ຂ້າພະເຈົ້າຢາໂຄບຈະເວົ້າ
ກັບພວກທ່ານຜູ້ທີ່ມີໃຈບໍລິສຸດ. ຈົ່ງຫວັງໃນ
ພຣະເຈົ້າດ້ວຍຈິດໃຈໝັ້ນຄົງ, ແລະ ອະທິ
ຖານເຖິງພຣະອົງດ້ວຍສັດທາຢ່າງຫລວງ
ຫລາຍ, ແລະ ພຣະອົງຈະປອບໂຍນພວກ
ທ່ານໃນຄວາມທຸກຂອງພວກທ່ານ, ແລະ
ພຣະອົງຈະວິງວອນແທນພວກທ່ານ, ແລະ
ຈະສົ່ງຄວາມຍຸດຕິທຳລົງມາເທິງຄົນທີ່
ສະແຫວງຫາຄວາມພິນາດໃຫ້ພວກທ່ານ.
2 ໂອ້ ທ່ານທັງຫລາຍຜູ້ທີ່ມີໃຈບໍລິສຸດ,
ຈົ່ງເງີຍໜ້າຂຶ້ນ ແລະ ຮັບພຣະຄຳອັນໜ້າ
ພໍໃຈຂອງພຣະເຈົ້າ, ແລະ ຈົ່ງຊື່ນຊົມຢູ່
ດ້ວຍຄວາມຮັກຂອງພຣະອົງ; ພວກທ່ານ
ຈະເຮັດໄດ້ຖ້າຫາກຈິດໃຈຂອງພວກທ່ານ
[ກ]ແນ່ວແນ່ຕະຫລອດໄປ.
3 ແຕ່ວິບັດ, ວິບັດແກ່ຜູ້ທີ່ບໍ່ມີໃຈບໍລິສຸດ
ແລະ ທີ່ [ກ]ສົກກະປົກຕໍ່ພຣະພັກຂອງພຣະ
ເຈົ້າໃນມື້ນີ້; ເພາະຖ້າຫາກພວກທ່ານບໍ່ກັບ
ໃຈ ແຜ່ນດິນຈະຖືກສາບແຊ່ງເພື່ອເຫັນແກ່
ພວກທ່ານ; ແລະ ຊາວເລມັນຊຶ່ງບໍ່ສົກກະ
ປົກເທົ່າກັບພວກທ່ານ, ແຕ່ປານນັ້ນພວກ
ເຂົາຍັງຖືກ [ຂ]ສາບແຊ່ງດ້ວຍຄຳສາບແຊ່ງ
ຢ່າງສາຫັດ, ຈະຂ້ຽນຕີພວກທ່ານຈົນເຖິງ
ຄວາມພິນາດ.
4 ແລະ ເວລາຈະມາເຖິງຢ່າງວ່ອງໄວ ຖ້າ
ຫາກພວກທ່ານບໍ່ກັບໃຈ ພວກເຂົາຈະເປັນ
ເຈົ້າຂອງແຜ່ນດິນຊຶ່ງເປັນມູນມໍລະດົກຂອງ
ພວກທ່ານ, ແລະ ອົງພຣະຜູ້ເປັນເຈົ້າຈະ
[ກ]ນຳເອົາຄົນທີ່ຊອບທຳອອກຈາກບັນດາ
ພວກທ່ານ.
5 ຈົ່ງເບິ່ງ, ຊາວເລມັນພີ່ນ້ອງຂອງພວກ
ທ່ານ, ຜູ້ທີ່ພວກທ່ານກຽດຊັງ ເພາະຄວາມ
ສົກກະປົກຂອງພວກເຂົາ ແລະ ການສາບ
ແຊ່ງຊຶ່ງເກີດຂຶ້ນກັບຜິວໜັງຂອງພວກເຂົາ
ກັບມາເປັນຜູ້ຊອບທຳກວ່າພວກທ່ານ;
ເພາະວ່າພວກເຂົາ [ກ]ບໍ່ລືມພຣະບັນຍັດ
ຂອງພຣະຜູ້ເປັນເຈົ້າ, ຊຶ່ງໄດ້ປະທານໃຫ້
ບິດາຂອງພວກເຮົາວ່າ—ພວກເຂົາຈະ
ຕ້ອງມີເມຍແຕ່ຄົນດຽວເທົ່ານັ້ນ, ແລະ ບໍ່
ໃຫ້ມີເມຍນ້ອຍ ແລະ ບໍ່ໃຫ້ມີການໂສເພນີ
ຢູ່ໃນບັນດາພວກເຂົາ.
6 ແລະ ບັດນີ້, ພວກເຂົາຍຶດຖືທີ່ຈະຮັກ
ສາພຣະບັນຍັດນີ້; ດັ່ງນັ້ນຍ້ອນການຍຶດຖື
ພຣະບັນຍັດນີ້, ອົງພຣະຜູ້ເປັນເຈົ້າຈຶ່ງບໍ່ທຳ
ລາຍພວກເຂົາ, ແຕ່ພຣະອົງຈະ [ກ]ເມດຕາ

35 *ກ* ຢຄ 3:5–7.
**3** 2 *ກ* ແອວ 57:26–27.
3 *ກ* ຄມພ ສົກກະປົກ, ຄວາມສົກກະປົກ.
*ຂ* 1 ນຟ 12:23.
4 *ກ* ອມນ 1:5–7, 12–13.
5 *ກ* ຢຄ 2:35.
6 *ກ* 2 ນຟ 4:3, 6–7; ຮລມ 15:10–13.

ພວກເຂົາ; ແລະ ມື້ໜຶ່ງພວກເຂົາຈະກາຍ
ເປັນຜູ້ຄົນທີ່ໄດ້ຮັບພອນ.
7 ຈົ່ງເບິ່ງ, ຜົວຂອງພວກເຂົາ [ກ]ຮັກເມຍ
ຂອງພວກເຂົາ, ແລະ ເມຍຂອງພວກເຂົາ
ກໍຮັກຜົວຂອງພວກເຂົາ; ແລະ ຜົວ ເມຍກໍ
ຮັກລູກໆ; ແລະ ສ່ວນຄວາມບໍ່ເຊື່ອຖື ແລະ
ຄວາມກຽດຊັງຂອງພວກເຂົາທີ່ມີຕໍ່ພວກ
ທ່ານກໍເປັນຍ້ອນຄວາມຊົ່ວຮ້າຍຂອງບັນ
ພະບຸລຸດຂອງພວກເຂົາ; ດັ່ງນັ້ນໃນສາຍ
ພຣະເນດຂອງພຣະຜູ້ສ້າງຍິ່ງໃຫຍ່ຂອງ
ພວກທ່ານແລ້ວ, ພວກທ່ານດີກວ່າພວກ
ເຂົາຊ່ຳໃດ?
8 ໂອ້ ພີ່ນ້ອງຂອງຂ້າພະເຈົ້າເອີຍ, ຖ້າ
ຫາກພວກທ່ານບໍ່ກັບໃຈຈາກບາບຂອງ
ພວກທ່ານແລ້ວ ຂ້າພະເຈົ້າຢ້ານວ່າຜິວໜັງ
ຂອງພວກເຂົາຈະຂາວກວ່າຜິວໜັງຂອງ
ພວກທ່ານ, ເມື່ອພວກທ່ານຖືກນຳໄປຢູ່ຕໍ່
ໜ້າພຣະທີ່ນັ່ງຂອງພຣະເຈົ້າພ້ອມກັນກັບ
ພວກເຂົາ.
9 ດັ່ງນັ້ນ, ຂ້າພະເຈົ້າຈະໃຫ້ພຣະບັນ
ຍັດຂໍ້ໜຶ່ງ ຊຶ່ງເປັນພຣະຄຳຂອງພຣະເຈົ້າ
ໄວ້ກັບພວກທ່ານວ່າ, ຢ່າໄດ້ໝິ່ນປະໝາດ
ພວກເຂົາອີກຕໍ່ໄປເພາະຄວາມດຳຂອງຜິວ
ໜັງຂອງພວກເຂົາ; ພ້ອມທັງຢ່າໄດ້ໝິ່ນ
ປະໝາດເພາະຄວາມສົກກະປົກຂອງພວກ
ເຂົາ; ຈົ່ງຄຳນຶງເຖິງຄວາມສົກກະປົກຂອງ
ຕົນເອງ, ແລະ ຈົ່ງຈຳໄວ້ວ່າຄວາມສົກກະ
ປົກຂອງພວກເຂົານັ້ນແມ່ນມາຈາກບັນພະ
ບຸລຸດຂອງພວກເຂົາ.
10 ດັ່ງນັ້ນ, ພວກທ່ານຈົ່ງຄິດເຖິງ [ກ]ລູກ
ຫລານຂອງພວກທ່ານວ່າ, ພວກທ່ານໄດ້
ເຮັດໃຫ້ໃຈຂອງພວກເຂົາໂສກເສົ້າຊ່ຳໃດ
ເພາະຕົວຢ່າງທີ່ພວກທ່ານເຮັດໄວ້ຕໍ່ໜ້າ
ພວກເຂົາ, ແລະ ຈົ່ງຈຳໄວ້ອີກວ່າເພາະ
ຄວາມສົກກະປົກຂອງພວກທ່ານ, ພວກ
ທ່ານຈະນຳລູກຫລານຂອງພວກທ່ານໄປສູ່
ຄວາມພິນາດ, ແລະ ບາບຂອງພວກເຂົາຈະ
ກອງຢູ່ຫົວຂອງພວກທ່ານໃນວັນສຸດທ້າຍ.
11 ໂອ້ ພີ່ນ້ອງຂອງຂ້າພະເຈົ້າເອີຍ, ຈົ່ງ
ເຊື່ອຟັງຄຳເວົ້າຂອງຂ້າພະເຈົ້າເຖີດ; ຈົ່ງ
ປຸກຄວາມສາມາດຂອງຈິດວິນຍານຂອງ
ພວກທ່ານໃຫ້ຕື່ນຂຶ້ນ; ຈົ່ງສັ່ນຕົວຂອງພວກ
ທ່ານເພື່ອພວກທ່ານຈະໄດ້ [ກ]ຕື່ນຈາກການ
ນອນຫລັບແຫ່ງຄວາມຕາຍ, ແລະ ເຮັດ
ໃຫ້ຕົວຫລຸດພົ້ນອອກຈາກຄວາມເຈັບປວດ
ແຫ່ງ [ຂ]ນະລົກ ເພື່ອພວກທ່ານຈະບໍ່ກັບມາ
ເປັນ [ຄ]ບໍລິວານຂອງມານທີ່ຖືກເຂົ້າໄປໃນ
ທະເລໄຟ ແລະ ມາດ ຊຶ່ງເປັນ [ງ]ຄວາມຕາຍ
ເທື່ອທີສອງ.
12 ແລະ ບັດນີ້ຂ້າພະເຈົ້າຢາໂຄບໄດ້
ເວົ້າກັບຜູ້ຄົນຂອງນີໄຟຫລາຍເລື່ອງ, ໂດຍ
ຕັກເຕືອນພວກເຂົາບໍ່ໃຫ້ [ກ]ລ່ວງປະເວນີ
ແລະ [ຂ]ກິເລດຕັນຫາ ແລະ ບາບທຸກຢ່າງ,
ໂດຍໄດ້ບອກພວກເຂົາເຖິງຜົນສະທ້ອນ
ອັນເປັນຕາຢ້ານທີ່ຈະເກີດຂຶ້ນຈາກມັນ.
13 ແລະ ຂ້າພະເຈົ້າບັນທຶກໄວ້ພຽງໜຶ່ງ
ສ່ວນຮ້ອຍຂອງການປະຕິບັດຕົວຈິງຂອງຜູ້
ຄົນພວກນີ້, ຊຶ່ງໃນຕອນນີ້ ກຳລັງເລີ່ມຂະ
ຫຍາຍຕົວຂຶ້ນ ຊຶ່ງບໍ່ສາມາດບັນທຶກໄວ້ໃນ
ແຜ່ນຈາລຶກ [ກ]ເຫລົ່ານີ້; ແຕ່ວ່າການປະຕິ
ບັດຕົວຈິງຫລາຍຢ່າງ, ແລະ ເລື່ອງສົງຄາມ
ຂອງພວກເຂົາ, ແລະ ເລື່ອງການຂັດແຍ້ງ
ຂອງພວກເຂົາ, ແລະ ເລື່ອງການສືບຄອງ
ລາຊາບັນລັງຂອງກະສັດຂອງພວກເຂົາໄດ້

---

7 *ກ* ຄມພ ຄອບຄົວ; ຮັກ, ຄວາມຮັກ.
10 *ກ* ຄມພ ເດັກ, ເດັກນ້ອຍ.
11 *ກ* ແອວ 5:6–9.
*ຂ* ຄມພ ນະລົກ.
*ຄ* 2 ນຟ 9:8–9.
*ງ* ຄມພ ຄວາມຕາຍທາງວິນຍານ.
12 *ກ* ຄມພ ການລ່ວງປະເວນີ.
*ຂ* ຄມພ ກິເລດຕັນຫາ; ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
13 *ກ* 1 ນຟ 19:1–4; ຢຄ 1:1–4.

ບັນທຶກໄວ້ໃນແຜ່ນຈາລຶກອີກເຫລັ້ມໜຶ່ງຊຶ່ງ
ໃຫຍ່ກວ່ານີ້.
14 ແຜ່ນ ຈາລຶກ ເຫລົ່ານີ້ ໄດ້ ຖືກ ເອີ້ນ ວ່າ
ແຜ່ນ ຈາລຶກ ຂອງຢາໂຄບ, ແລະ ມັນ ເຮັດ
ຂຶ້ນດ້ວຍມືຂອງນີໄຟ. ແລະ ຂ້າພະເຈົ້າຈົບ
ການເວົ້າຂໍ້ຄວາມເຫລົ່ານີ້.

## ບົດທີ 4

*ສາດສະ ດາທຸກທ່ານ ໄດ້ນະມັດສະການ ພຣະບິດາໃນພຣະນາມຂອງພຣະຄຣິດ—ການ ຖວາຍ ອີຊາກຂອງອັບຣາຮາມເປັນ ລັກສະນະດຽວກັນກັບ ພຣະ ເຈົ້າ ຖວາຍ ພຣະ ບຸດ ອົງດຽວທີ່ຖືກຳເນີດຂອງພຣະ ອົງ—ມະນຸດຕ້ອງທຳຕົນ ໃຫ້ຖືກຕ້ອງກັບ ພຣະເຈົ້າ ໂດຍຜ່ານການຊົດໃຊ້—ຊາວຢິວ ຈະປະຕິເສດຮາກຖານຫີນ. ປະມານ 544–421 ປີ ກ່ອນ ຄ.ສ.*

1 ບັດນີ້ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື ຂ້າພະເຈົ້າຢາໂຄບຊຶ່ງໄດ້ປະຕິບັດສາດ
ສະໜາກິດຫລາຍຢ່າງຕໍ່ຜູ້ຄົນຂອງຂ້າພະ
ເຈົ້າດ້ວຍຄຳເວົ້າ, (ແລະ ຂ້າພະເຈົ້າບໍ່ສາ
ມາດບັນທຶກຂໍ້ຄວາມໄວ້ໝົດນອກຈາກພຽງ
ເລັກໜ້ອຍ ເທົ່ານັ້ນ ເພາະວ່າການຄວັດ
ຕົວໜັງສືໄວ້ໃນແຜ່ນຈາລຶກນັ້ນແມ່ນຍາກ
ຫລາຍ) ແລະ ພວກເຮົາຮູ້ວ່າ ສິ່ງທີ່ພວກເຮົາ
ບັນທຶກໄວ້ໃນແຜ່ນຈາລຶກນັ້ນຕ້ອງຍັງຢູ່;
2 ແຕ່ເລື່ອງຫຍັງກໍຕາມທີ່ພວກເຮົາບັນ
ທຶກໄວ້ໃນສິ່ງອື່ນຈະຕ້ອງຕົກເຮ່ຍ ແລະ
ລຶບເລືອນໄປນອກຈາກຈະບັນທຶກໄວ້ໃນ
ແຜ່ນຈາລຶກເທົ່ານັ້ນ, ແຕ່ພວກເຮົາສາມາດ
ບັນທຶກຂໍ້ຄວາມໄວ້ໃນ ແຜ່ນຈາລຶກພຽງ
ເລັກໜ້ອຍ ເພື່ອຈະໃຫ້ລະດັບຄວາມຮູ້ເລັກ
ໜ້ອຍ ແກ່ລູກຫລານ ແລະ ພີ່ນ້ອງທີ່ຮັກ
ແພງຂອງພວກເຮົາກ່ຽວກັບພວກເຮົາ, ຫລື
ກ່ຽວກັບບັນພະບຸລຸດຂອງພວກເຂົາ—
3 ບັດນີ້ພວກເຮົາປິຕິຍິນດີໃນເລື່ອງນີ້;
ແລະ ພວກເຮົາອອກແຮງງານຢ່າງພາກ
ພຽນ ທີ່ຈະຄວັດຂໍ້ຄວາມນີ້ໄວ້ໃນແຜ່ນ
ຈາລຶກໂດຍຫວັງວ່າ ພີ່ນ້ອງທີ່ຮັກແພງຂອງ
ພວກເຮົາ ແລະ ລູກຫລານຂອງພວກເຮົາ
ຈະຮັບມັນດ້ວຍໃຈທີ່ຮູ້ບຸນຄຸນ, ແລະ ອ່ານ
ເພື່ອຮຽນຮູ້ດ້ວຍຄວາມສຸກ ແລະ ບໍ່ແມ່ນ
ດ້ວຍຄວາມເສົ້າສະຫລົດໃຈ, ແລະ ບໍ່ແມ່ນ
ດ້ວຍຄວາມໝິ່ນປະໝາດບິດາມານດາຜູ້
ທຳອິດຂອງພວກເຮົາ.
4 ເພາະເພື່ອເຈດຕະນານີ້ ພວກເຮົາຈຶ່ງ
ໄດ້ບັນທຶກເລື່ອງເຫລົ່ານີ້ໄວ້ເພື່ອພວກລູກ
ຫລານຈະໄດ້ຮູ້ວ່າພວກເຮົາ [ກ]ຮູ້ຈັກພຣະ
ຄຣິດມາກ່ອນ; ແລະ ພວກເຮົາມີຄວາມ
ຫວັງໃນລັດສະໝີພາບຂອງພຣະອົງມາໄດ້
ຫລາຍຮ້ອຍປີແລ້ວ ກ່ອນທີ່ພຣະອົງຈະສະ
ເດັດມາ ແລະ ບໍ່ມີແຕ່ພວກເຮົາເທົ່ານັ້ນທີ່
ມີຄວາມຫວັງໃນລັດສະໝີພາບຂອງພຣະ
ອົງ, ແຕ່ [ຂ]ສາດສະດາຜູ້ສັກສິດທັງຫລາຍ
ຊຶ່ງຢູ່ມາກ່ອນພວກເຮົາກໍມີຄວາມຫວັງເຊັ່ນ
ດຽວກັນ.
5 ຈົ່ງເບິ່ງ, ພວກເພິ່ນເຊື່ອໃນພຣະຄຣິດ
ແລະ [ກ]ນະມັດສະການພຣະບິດາໃນພຣະ
ນາມຂອງພຣະອົງ ແລະ ພວກເຮົາກໍນະມັດ
ສະການພຣະບິດາໃນພຣະນາມຂອງພຣະ
ອົງເໝືອນກັນ; ແລະ ເພື່ອເຈດຕະນານີ້
ພວກເຮົາຈຶ່ງຮັກສາ [ຂ]ກົດຂອງໂມເຊ ໂດຍ
[ຄ]ມຸ້ງຫວັງໃຫ້ຈິດວິນຍານຂອງພວກເຮົາ

**4** 4 *ກ* ຄມພ ພຣະເຢຊູຄຣິດ.
*ຂ* ລກ 24:25–27; ຢຄ 7:11; ມຊຢ 13:33–35; ຄພ 20:26.
5 *ກ* ມຊ 5:8.
*ຂ* 2 ນຟ 25:24; ຈຣ 1:11; ມຊຢ 13:27, 30; ແອວ 25:15–16. ຄມພ ກົດຂອງໂມເຊ.
*ຄ* ຄລຕ 3:24.

ໄປຫາພຣະອົງ, ແລະ ດ້ວຍເຫດນີ້ ກໍດີຈຶ່ງ
ຖືກຕັ້ງໄວ້ໃຫ້ສັກສິດສຳລັບພວກເຮົາ ເພື່ອ
ຄວາມຊອບທຳແມ່ນຄືກັນກັບອັບຣາຮາມ
ຢູ່ໃນຖິ່ນແຫ້ງແລ້ງກັນດານທີ່ເຊື່ອຟັງພຣະ
ບັນຊາຂອງພຣະເຈົ້າຈົນວ່າໄດ້ຖວາຍອິ
ຊາກລູກຊາຍຂອງເພິ່ນແດ່ພຣະອົງ ຊຶ່ງ
ເປັນລັກສະນະດຽວກັນກັບພຣະເຈົ້າຖວາຍ
ງພຣະບຸດອົງດຽວທີ່ຖືກຳເນີດຂອງພຣະອົງ.
6 ດັ່ງນັ້ນ, ພວກເຮົາຄົ້ນຫາການຂຽນ
ຂອງສາດສະດາ, ແລະ ພວກເຮົາໄດ້ຮັບ
ການເປີດເຜີຍຫລາຍເລື່ອງ ແລະ ວິນຍານ
ແຫ່ງ ກການທຳນາຍ; ແລະ ມີ ຂພະຍານ
ທັງໝົດນີ້ ພວກເຮົາຈຶ່ງໄດ້ຮັບຄວາມຫວັງ,
ແລະ ມີສັດທາຢ່າງບໍ່ສະທ້ານຫວັ່ນໄຫວ,
ເຖິງຂະໜາດທີ່ພວກເຮົາສາມາດ ຄບັງຄັບ
ບັນຊາໃນ ງພຣະນາມຂອງພຣະເຢຊູໄດ້
ແທ້ໆຈົນວ່າຕົ້ນໄມ້, ຫລື ພູເຂົາ, ຫລື ຄື້ນໃນ
ທະເລກໍເຊື່ອຟັງເຮົາແທ້.
7 ເຖິງຢ່າງໃດກໍຕາມ, ອົງພຣະຜູ້ເປັນ
ເຈົ້າຍັງໄດ້ສະແດງໃຫ້ພວກເຮົາເຫັນ
ກຄວາມອ່ອນແອຂອງພວກເຮົາ, ເພື່ອພວກ
ເຮົາຈະຮູ້ວ່າເປັນຍ້ອນພຣະຄຸນຂອງພຣະ
ອົງ ແລະ ພຣະເມດຕາກະລຸນາອັນຍິ່ງໃຫຍ່
ຂອງພຣະອົງທີ່ມີຕໍ່ລູກຫລານມະນຸດ, ພວກ
ເຮົາຈຶ່ງມີອຳນາດເຮັດສິ່ງເຫລົ່ານີ້ໄດ້.
8 ຈົ່ງເບິ່ງ, ວຽກງານຂອງພຣະຜູ້ເປັນເຈົ້າ
ຍິ່ງໃຫຍ່ ແລະ ໜ້າອັດສະຈັນ. ກຄວາມລຶກ
ລັບຂອງພຣະອົງ ຂບໍ່ສາມາດຢັ່ງເຖິງໄດ້;
ແລະ ເປັນໄປບໍ່ໄດ້ທີ່ຄົນຈະພົບເຫັນເສັ້ນ
ທາງຂອງພຣະອົງທັງໝົດ. ແລະ ບໍ່ມີຜູ້ໃດ
ຈະ ຄຮູ້ຈັກ ງເສັ້ນທາງຂອງພຣະອົງນອກ
ຈາກພຣະອົງຈະເປີດເຜີຍໃຫ້ເຂົາຮູ້; ດັ່ງ
ນັ້ນ, ພີ່ນ້ອງເອີຍ, ຢ່າໄດ້ໝິ່ນປະໝາດການ
ເປີດເຜີຍຂອງພຣະເຈົ້າເລີຍ.
9 ເພາະ ຈົ່ງ ເບິ່ງ, ໂດຍອຳນາດແຫ່ງ
ກພຣະຄຳຂອງພຣະອົງ ຂມະນຸດຈຶ່ງໄດ້ມາ
ສູ່ຜືນແຜ່ນດິນໂລກ, ຊຶ່ງແຜ່ນດິນໂລກໄດ້
ຖືກສ້າງຂຶ້ນໂດຍອຳນາດແຫ່ງພຣະຄຳ
ຂອງພຣະອົງ. ດັ່ງນັ້ນ, ຖ້າຫາກພຣະເຈົ້າ
ສາມາດຮັບສັ່ງ ແລະ ໂລກເປັນຂຶ້ນມາ
ແລະ ຮັບສັ່ງ ແລະ ມະນຸດຖືກສ້າງຂຶ້ນມາ,
ໂອ້ ແລ້ວເປັນຫຍັງພຣະອົງຈະບໍ່ສາມາດ
ບັນຊາ ຄແຜ່ນດິນໂລກ, ຫລື ວຽກງານແຫ່ງ
ພຣະຫັດຂອງພຣະອົງເໜືອຜືນແຜ່ນດິນນີ້
ໄດ້ຕາມພຣະປະສົງ ແລະ ຄວາມພໍພຣະ
ໄທຂອງພຣະອົງ?
10 ດັ່ງນັ້ນ, ພີ່ນ້ອງເອີຍ, ຢ່າໄດ້ພະຍາ
ຍາມ ກແນະນຳພຣະຜູ້ເປັນເຈົ້າ, ແຕ່ໃຫ້ຮັບ
ເອົາຄຳແນະນຳຈາກພຣະຫັດຂອງພຣະ
ອົງ. ເພາະຈົ່ງເບິ່ງ, ຕົວຂອງພວກທ່ານກໍ
ຮູ້ຈັກແລ້ວວ່າ ພຣະອົງໄດ້ແນະນຳດ້ວຍ
ຂຄວາມສະຫລຽວສະຫລາດ ແລະ ດ້ວຍ
ຄວາມຍຸດຕິທຳ ແລະ ດ້ວຍຄວາມເມດຕາ
ອັນຍິ່ງໃຫຍ່ ຕໍ່ວຽກງານທັງໝົດຂອງພຣະ
ອົງ.
11 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງເອີຍ, ຈົ່ງ

5ງ ປຖກ 22:1–14;
ຢຣ 3:16–18.
ຄມພ ອົງດຽວທີ່ຖືກຳເນີດ.
6ກ ຄມພ ທຳນາຍ, ການ
ທຳນາຍ, ຄຳທຳນາຍ.
ຂ ຄມພ ພະຍານ.
ຄ ຄມພ ອຳນາດ.
ງ ກຈກ 3:6–16;
3 ນຟ 8:1.
7ກ ອທ 12:27.
8ກ ຄພ 19:10; 76:114.
ຄມພ ຄວາມລຶກລັບ
ຂອງພຣະເຈົ້າ.
ຂ ຣມ 11:33–36.
ຄ 1 ກຣທ 2:9–16;
ແອວ 26:21–22.
ຄມພ ຄວາມຮູ້.
ງ ອຊຢ 55:8–9.
9ກ ມມ 9:17;
ມຊ 1:32.
ຂ ຄມພ ສ້າງ, ການສ້າງ;
ມະນຸດ.
ຄ ຣລມ 12:8–17.
10ກ 2 ນຟ 9:28–29;
ແອວ 37:12, 37;
ຄພ 3:4, 13.
ຂ ຄມພ ສະຕິປັນຍາ;
ຮອບຮູ້ທຸກຢ່າງ.

ຄືນດີກັບພຣະອົງທາງ [ກ]ການຊົດໃຊ້ຂອງ
ພຣະຄຣິດ [ຂ]ພຣະບຸດອົງດຽວທີ່ຖືກກຳເນີດ
ຂອງພຣະອົງ, ແລະ ພວກທ່ານຈະໄດ້ຮັບ
[ຄ]ການຟື້ນຄືນຊີວິດໂດຍອຳນາດຂອງການ
ຟື້ນຄືນຊີວິດຊຶ່ງຢູ່ໃນພຣະຄຣິດ, ແລະ ຖືກ
ນຳມາເປັນ [ງ]ຜົນທຳອິດຂອງພຣະຄຣິດ
ຕໍ່ພຣະເຈົ້າ, ໂດຍມີສັດທາ, ແລະ ໄດ້ຮັບ
ຄວາມຫວັງດີແຫ່ງລັດສະໝີພາບໃນພຣະ
ອົງກ່ອນທີ່ພຣະອົງຈະສະແດງພຣະອົງເອງ
ໃຫ້ປະຈັກໃນເນື້ອໜັງ.

12 ແລະ ບັດນີ້ພີ່ນ້ອງທີ່ຮັກແພງເອີຍ,
ຢ່າໄດ້ແປກໃຈເລີຍທີ່ຂ້າພະເຈົ້າເວົ້າເລື່ອງ
ນີ້ກັບພວກທ່ານ; ເພາະເຫດໃດຂ້າພະເຈົ້າ
ຈຶ່ງບໍ່ [ກ]ເວົ້າເຖິງການຊົດໃຊ້ຂອງພຣະຄຣິດ,
ແລະ ມີຄວາມຮູ້ອັນສົມບູນກ່ຽວກັບພຣະ
ອົງດັ່ງທີ່ມີຄວາມຮູ້ກ່ຽວກັບການຟື້ນຄືນຊີ
ວິດ ແລະ ໂລກທີ່ຈະມາເຖິງ?

13 ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າ
ເອີຍ, ຜູ້ໃດທີ່ທຳນາຍ, ໃຫ້ເຂົາທຳນາຍ
ເຖິງຄວາມເຂົ້າໃຈຂອງມະນຸດ; ເພາະວ່າ
[ກ]ພຣະວິນຍານກ່າວດ້ວຍຄວາມຈິງ ແລະ
ບໍ່ຕົວະ. ດັ່ງນັ້ນ, ມັນຈຶ່ງກ່າວເຖິງເລື່ອງດັ່ງ
ທີ່ [ຂ]ເປັນຈິງ ແລະ ເຖິງເລື່ອງດັ່ງທີ່ຈະເປັນ
ຈິງ. ດັ່ງນັ້ນເລື່ອງເຫລົ່ານີ້ຈຶ່ງຖືກສະແດງ
ໃຫ້ປະຈັກແກ່ພວກເຮົາ [ຄ]ຢ່າງແຈ່ມແຈ້ງ
ເພື່ອຄວາມລອດຂອງຈິດວິນຍານຂອງ
ພວກເຮົາ. ແຕ່ຈົ່ງເບິ່ງ, ພວກເຮົາບໍ່ໄດ້ເປັນ
ພະຍານໃນເລື່ອງເຫລົ່ານີ້ຕາມລຳພັງ;
ເພາະພຣະເຈົ້າໄດ້ຮັບສັ່ງເລື່ອງເຫລົ່ານີ້ກັບ
ສາດສະດາໃນສະໄໝກ່ອນມາແລ້ວ.

14 ແຕ່ຈົ່ງເບິ່ງ, ຊາວຢິວເປັນຄົນ [ກ]ແຂງ
ຄໍ ແລະ ພວກເຂົາ [ຂ]ດູໝິ່ນປະໝາດຄຳເວົ້າ
ອັນແຈ່ມແຈ້ງ ແລະ ເຂັ່ນຂ້າສາດສະດາ,
ແລະ ສະແຫວງຫາສິ່ງທີ່ພວກເຂົາບໍ່ອາດ
ເຂົ້າໃຈໄດ້. ດັ່ງນັ້ນເພາະ [ຄ]ຄວາມຕາບອດ
ຂອງພວກເຂົາຊຶ່ງຕາບອດນັ້ນມາຈາກການ
ເບິ່ງຂ້າມເຄື່ອງໝາຍ, ພວກເຂົາຈຶ່ງຈຳຕ້ອງ
ຕົກໄປ; ເພາະພຣະເຈົ້າໄດ້ເອົາຄວາມແຈ່ມ
ແຈ້ງຂອງພຣະອົງໄປຈາກພວກເຂົາ, ແລະ
ມອບຫລາຍສິ່ງຫລາຍຢ່າງໃຫ້ແກ່ພວກ
ເຂົາຊຶ່ງພວກເຂົາເຂົ້າໃຈ [ງ]ບໍ່ໄດ້, ເພາະ
ພວກເຂົາປາດຖະໜາແນວນັ້ນ. ແລະ
ຍ້ອນວ່າພວກເຂົາປາດຖະໜາແນວນັ້ນ,
ພຣະເຈົ້າຈຶ່ງເຮັດແນວນັ້ນເພື່ອພວກເຂົາ
ຈະໄດ້ສະດຸດ.

15 ແລະ ບັດນີ້ຂ້າພະເຈົ້າຢາໂຄບໄດ້ຖືກ
ນຳພາໂດຍພຣະວິນຍານໄປເຖິງການທຳ
ນາຍ; ເພາະຂ້າພະເຈົ້າໄດ້ເຫັນໂດຍການ
ກະທຳຂອງພຣະວິນຍານຊຶ່ງຢູ່ໃນຂ້າພະ
ເຈົ້າ, ວ່າໂດຍ [ກ]ການສະດຸດຂອງຊາວຢິວ
ພວກເຂົາຈະບໍ່ [ຂ]ຍອມຮັບ [ຄ]ຫີນຊຶ່ງຢູ່ເທິງ
ນັ້ນພວກເຂົາຈະໄດ້ສ້າງ ແລະ ມີຮາກຖານ
ອັນປອດໄພ.

16 ແຕ່ຈົ່ງເບິ່ງ, ຕາມພຣະຄຳພີແລ້ວ,
[ກ]ຫີນກ້ອນນີ້ຈະກາຍເປັນ [ຂ]ຮາກຖານອັນ
ຍິ່ງໃຫຍ່ ແລະ ສຸດທ້າຍ ແລະ ແນ່ນອນອັນ

11 ກ ຄມພ ຊົດໃຊ້, ການຊົດໃຊ້.
ຂ ຮຣ 5:9.
ຄ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ງ ມຊຢ 15:21–23; 18:9; ແອວ 40:16–21.
12 ກ 2 ນຟ 25:26.
13 ກ ຄມພ ຈິງ, ຄວາມຈິງ; ພຣະວິນຍານບໍລິສຸດ.
ຂ ຄພ 93:24.
ຄ ແອວ 13:23.
14 ກ ມທ 23:37–38; 2 ນຟ 25:2.
ຂ 2 ກຣທ 11:3; 1 ນຟ 19:7; 2 ນຟ 33:2.
ຄ ອຊຢ 44:18; ຣມ 11:25.
ງ 2 ນຟ 25:1–2.
15 ກ ອຊຢ 8:13–15; 1 ກຣທ 1:23; 2 ນຟ 18:13–15.
ຂ 1 ນຟ 10:11.
ຄ ຄມພ ຫີນ; ຫີນເສົາເອກ.
16 ກ ພສສ 118:22–23.
ຂ ອຊຢ 28:16; ຮລມ 5:12.

ດຽວ, ຊຶ່ງເທິງນັ້ນຊາວຢິວຈະສາມາດສ້າງ
ຂຶ້ນໄດ້.
17 ແລະ ບັດນີ້ທ່ານທີ່ຮັກຂອງຂ້າພະ
ເຈົ້າ, ເປັນໄປໄດ້ແນວໃດທີ່ຄົນເຫລົ່ານີ້
ຫລັງຈາກປະຕິເສດຮາກຖານ [ກ]ອັນແນ່
ນອນແລ້ວຈະສ້າງຂຶ້ນເທິງນັ້ນໄດ້ ເພື່ອ
ວ່າມັນຈະໄດ້ກາຍເປັນຫີນເອກຂອງພວກ
ເຂົາ?
18 ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຂ້າພະເຈົ້າຢາກເປີດເຜີຍຄວາມລຶກ
ລັບນີ້ແກ່ພວກທ່ານ; ຖ້າຫາກດ້ວຍວິທີໃດ
ກໍຕາມຂ້າພະເຈົ້າບໍ່ຫວັ່ນໄຫວຈາກຄວາມ
ໝັ້ນຄົງຂອງຂ້າພະເຈົ້າໃນພຣະວິນຍານ
ແລະ ສະດຸດເພາະຄວາມເປັນຫ່ວງທີ່ຂ້າ
ພະເຈົ້າມີຕໍ່ພວກທ່ານຫລາຍເກີນໄປ.

## ບົດທີ 5

*ຢາໂຄບອ້າງເຖິງຖ້ອຍຄຳຂອງຊີນັດປຽບທຽບຕົ້ນໝາກກອກເທດ ແລະ ຕົ້ນໝາກກອກປ່າ—ພວກເຂົາຄືອິດສະຣາເອນ ແລະ ຄົນຕ່າງຊາດ—ການກະຈັດກະຈາຍ ແລະ ການເຕົ້າໂຮມຂອງຊາວອິດສະຣາເອນ ຊຶ່ງໄດ້ຄາດຄະເນໄວ້ແລ້ວ—ການກ່າວເຖິງຊາວນີໄຟກັບຊາວເລມັນ ແລະ ເຖິງເຊື້ອສາຍອິດສະຣາເອນທັງໝົດ—ຄົນຕ່າງຊາດຈະຖືກຕໍ່ເຂົ້າກັບອິດສະຣາເອນ—ໃນທີ່ສຸດສວນອະງຸ່ນຈະຖືກເຜົາ. ປະມານ 544–421 ປີກ່ອນ ຄ.ສ.*

1 ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າເອີຍ,
ພວກທ່ານຈຳບໍ່ໄດ້ບໍວ່າ ພວກທ່ານເຄີຍ
ອ່ານຂໍ້ຄວາມຂອງສາດສະດາ [ກ]ຊີນັດ ຊຶ່ງ
ເພິ່ນໄດ້ເວົ້າກັບເຊື້ອສາຍອິດສະຣາເອນ,
ມີຄວາມວ່າ:
2 ໂອ້ ເຊື້ອສາຍອິດສະຣາເອນເອີຍ, ຈົ່ງ
ຟັງ ແລະ ຈົ່ງເຊື່ອຟັງຄຳເວົ້າຂອງຂ້າພະ
ເຈົ້າ ຜູ້ເປັນສາດສະດາຄົນໜຶ່ງຂອງພຣະຜູ້
ເປັນເຈົ້າ.
3 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວ
ດັ່ງນີ້, ໂອ້ ເຊື້ອສາຍ [ກ]ອິດສະຣາເອນເອີຍ,
ເຮົາຈະປຽບທຽບເຈົ້າໃສ່ກັບ [ຂ]ຕົ້ນໝາກ
ກອກເທດໃນສວນ, ຊຶ່ງຄົນຜູ້ໜຶ່ງເອົາມາ
ປູກ ແລະ ບົວລະບັດໃນ [ຄ]ສວນອະງຸ່ນຂອງ
ເພິ່ນ; ແລະ ມັນໃຫຍ່ຂຶ້ນ, ແລະ ເຖົ້າແກ່ລົງ,
ແລະ ເລີ່ມ [ງ]ຊຸດໂຊມລົງ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ອອກໄປ ແລະ
ເພິ່ນເຫັນວ່າຕົ້ນໝາກກອກເທດຂອງເພິ່ນ
ເລີ່ມຊຸດໂຊມລົງ; ແລະ ເພິ່ນໄດ້ກ່າວວ່າ:
ເຮົາຈະລິງ່າຂອງມັນອອກ ແລະ ພອນດິນ
ຮອບຕົ້ນມັນ ແລະ ບຳລຸງມັນເພື່ອມັນຈະ
ແຕກງ່າ ແລະ ປົ່ງໃບງາມຂຶ້ນເພື່ອມັນຈະບໍ່
ຕາຍ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ລິງ່າມັນອອກ ແລະ ໄດ້ພອນດິນຮອບ
ຕົ້ນມັນ, ແລະ ບຳລຸງມັນຕາມຄຳເວົ້າຂອງ
ເພິ່ນ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກນັ້ນ, ຫລາຍມື້ຕໍ່ມາມັນໄດ້ແຕກງ່າ
ແລະ ປົ່ງໃບງາມຂຶ້ນ, ຈົ່ງເບິ່ງຍອດໃຫຍ່
ຂອງມັນເລີ່ມຫ່ຽວແຫ້ງລົງ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ເຫັນ ແລະ ເວົ້າ
ກັບຄົນໃຊ້ຂອງເພິ່ນວ່າ: ມັນເຮັດໃຫ້ເຮົາ

---

17 *ກ* ມທ 19:30; ຄພ 29:30.
**5** 1 *ກ* ຄມພ ຊີນັດ.
3 *ກ* ອຊກ 36:8. ຄມພ ອິດສະຣາເອນ.
*ຂ* ຣມ 11:17–24. ຄມພ ໝາກກອກເທດ, ຕົ້ນ.
*ຄ* ຄພ 101:44. ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
*ງ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.

ມີຄວາມໂສກເສົ້າຫລາຍທີ່ຈະສູນເສຍຕົ້ນ
ໄມ້ນີ້ໄປ; ດັ່ງນັ້ນ ຈົ່ງໄປຕັດເອົາງ່າຂອງຕົ້ນ
ໝາກກອກ ᵍປ່າ, ແລ້ວເອົາມັນມາໃຫ້ເຮົາ;
ແລະ ພວກເຮົາຈະຫັກງ່າໃຫຍ່ ຊຶ່ງກຳລັງ
ຫ່ຽວແຫ້ງອອກ, ແລະ ພວກເຮົາຈະໂຍນ
ມັນເຂົ້າກອງໄຟໃຫ້ມັນໄໝ້ໄປເສຍ.
8 ແລະ ຈົ່ງເບິ່ງ ເຈົ້ານາຍຂອງສວນ
ອະງຸ່ນໄດ້ກ່າວວ່າ, ເຮົາຈະເອົາງ່າອ່ອນ
ແລະ ງາມເຫລົ່ານີ້ຢ່າງຫລວງຫລາຍໄປ,
ແລະ ເຮົາຈະຕໍ່ງ່າມັນເຂົ້າກັບທີ່ໃດກໍຕາມ
ທີ່ເຮົາຕ້ອງການ; ເຖິງວ່າຮາກຂອງມັນຈະ
ຕາຍກໍບໍ່ສຳຄັນ, ເຮົາຈະຮັກສາແນວຂອງ
ມັນໄວ້ໃຫ້ຕົວເຮົາເອງ; ດັ່ງນັ້ນ, ເຮົາຈະເອົາ
ກິ່ງອ່ອນ ແລະ ງາມເຫລົ່ານີ້ໄປ ແລະ ເຮົາ
ຈະຕໍ່ງ່າມັນເຂົ້າກັບທີ່ໃດກໍຕາມທີ່ເຮົາຕ້ອງ
ການ.
9 ເຈົ້າຈົ່ງເອົາງ່າຂອງຕົ້ນໝາກກອກປ່າ
ໄປ ແລະ ຕໍ່ງ່າມັນເຂົ້າ ᵍແທນທີ່, ແລະ ງ່າ
ເຫລົ່ານີ້ທີ່ເຮົາໄດ້ຫັກອອກ ເຮົາຈະໂຍນມັນ
ເຂົ້າກອງໄຟ ແລະ ຈູດມັນເສຍ ເພື່ອມັນ
ຈະບໍ່ເປັນສິ່ງກີດຂວາງໃນສວນອະງຸ່ນຂອງ
ເຮົາ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ໃຊ້ຂອງເຈົ້ານາຍຂອງສວນອະງຸ່ນໄດ້ປະ
ຕິບັດຕາມຄຳສັ່ງຂອງເຈົ້ານາຍຂອງສວນ
ອະງຸ່ນ, ແລະ ໄດ້ຕໍ່ງ່າຂອງຕົ້ນໝາກກອກ
ᵍປ່າ.
11 ແລະ ເຈົ້ານາຍຂອງສວນອະງຸ່ນໃຫ້
ພວນດິນຮອບຕົ້ນ, ແລະ ລິງ່າ, ແລະ ບຳ
ລຸງ, ໂດຍກ່າວກັບຄົນໃຊ້ຂອງເພິ່ນວ່າ: ມັນ
ເຮັດໃຫ້ເຮົາໂສກເສົ້າທີ່ເຮົາຈະສູນເສຍຕົ້ນ
ໄມ້ນີ້ໄປ; ດັ່ງນັ້ນເພື່ອເຮົາອາດຈະໄດ້ຮັກ
ສາຮາກຂອງມັນໄວ້ບໍ່ໃຫ້ຕາຍ ເພື່ອເຮົາຈະ
ໄດ້ຮັກສາມັນໄວ້ໃຫ້ຕົວເຮົາ, ເຮົາຈຶ່ງເຮັດ
ດັ່ງນີ້.
12 ດັ່ງນັ້ນ, ເຈົ້າຈົ່ງໄປເຖີດ; ຈົ່ງບົວລະ
ບັດຕົ້ນໄມ້ນີ້ ແລະ ບຳລຸງມັນຕາມຄຳທີ່ເຮົາ
ສັ່ງ.
13 ແລະ ເຮົາຈະ ᵍວາງງ່າເຫລົ່ານີ້ໄວ້ໃນ
ບ່ອນໄກທີ່ສຸດຂອງສວນອະງຸ່ນຂອງເຮົາ,
ບ່ອນໃດກໍຕາມແລ້ວ ແຕ່ເຮົາຕ້ອງການ,
ແລະ ບໍ່ສຳຄັນສຳລັບເຈົ້າ; ແລະ ເຮົາເຮັດ
ສິ່ງນີ້ເພື່ອເຮົາຈະໄດ້ຮັກສາງ່າເດີມຂອງຕົ້ນ
ມັນໄວ້; ແລະ ເພື່ອວ່າເຮົາຈະໄດ້ເກັບໝາກ
ຂອງມັນໄວ້ ເພື່ອລະດູການໜ້າ ໃຫ້ຕົວເຮົາ
ໃຊ້ນຳອີກ; ເພາະວ່າມັນເຮັດໃຫ້ເຮົາໂສກ
ເສົ້າທີ່ເຮົາຈະສູນເສຍຕົ້ນໄມ້ນີ້ ແລະ ໝາກ
ຂອງມັນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ອອກໄປ ແລະ
ເຊື່ອງງ່າເດີມຂອງຕົ້ນໝາກກອກເທດໄວ້
ບ່ອນໄກທີ່ສຸດຂອງສວນອະງຸ່ນ, ບາງງ່າໄວ້
ບ່ອນໜຶ່ງ, ແລະ ບາງງ່າໄວ້ອີກບ່ອນໜຶ່ງ
ຕາມຄວາມປະສົງ ແລະ ຕາມຄວາມພໍໃຈ
ຂອງເພິ່ນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລາຍປີຜ່ານໄປ, ແລະ ເຈົ້ານາຍຂອງ
ສວນອະງຸ່ນໄດ້ກ່າວກັບຄົນໃຊ້ຂອງເພິ່ນ
ວ່າ: ມາເຖີດ, ໃຫ້ພວກເຮົາລົງໄປໃນສວນ
ອະງຸ່ນເພື່ອເຮັດວຽກງານໃນສວນອະງຸ່ນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນກັບຄົນໃຊ້ຂອງເພິ່ນ
ໄດ້ລົງໄປໃນສວນອະງຸ່ນເພື່ອເຮັດວຽກ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນໃຊ້ໄດ້
ເວົ້າກັບເຈົ້ານາຍຂອງຕົນວ່າ: ຈົ່ງເບິ່ງ, ເບິ່ງ
ນີ້ແມ; ຈົ່ງຫລຽວເບິ່ງຕົ້ນໄມ້ນີ້.

7 *ກ* ຣມ 11:17, 24.
9 *ກ* ຣມ 1:13.
10 *ກ* ຄນພ ຄົນຕ່າງຊາດ.
13 *ກ* 1 ນຟ 10:12.

17 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເຈົ້ານາຍຂອງສວນອະງຸ່ນໄດ້ຫລຽວເບິ່ງ
ແລະ ໄດ້ເຫັນຕົ້ນໄມ້ ຕົ້ນທີ່ກິ່ງໝາກກອກ
ປ່າຖືກຕໍ່ງ່າໄວ້; ແລະ ມັນງອກງາມ ແລະ
ເປັນ [ກ]ໝາກແລ້ວ. ແລະ ເພິ່ນເຫັນວ່າ ມັນ
ດີ ແລະ ໝາກຂອງມັນຄືກັນກັບໝາກຈາກ
ຕົ້ນເດີມຂອງມັນ.
18 ແລະ ເພິ່ນ ໄດ້ ກ່າວ ກັບ ຄົນ ໃຊ້ ວ່າ:
ຈົ່ງເບິ່ງ, ງ່າຂອງຕົ້ນປ່າໄດ້ຮັບຄວາມຊຸ່ມ
ເຢັນຈາກຮາກຂອງມັນ ຈົນຮາກນັ້ນເຮັດ
ໃຫ້ເກີດຄວາມແຂງແຮງຂຶ້ນ, ແລະ ຮາກ
ຂອງມັນມີຄວາມແຂງແຮງຫລາຍ; ງ່າປ່າ
ຈຶ່ງເກີດໝາກຫວານ. ບັດນີ້, ຖ້າຫາກພວກ
ເຮົາບໍ່ເອົາງ່າເຫລົ່ານີ້ມາຕໍ່ງ່າເຂົ້າກັບຕົ້ນ
ຂອງມັນ, ມັນກໍອາດຈະຕາຍ ແລະ ບັດນີ້,
ຈົ່ງເບິ່ງເຮົາຈະເກັບເອົາໝາກທີ່ເກີດຈາກ
ຕົ້ນຂອງມັນໄວ້ໃຫ້ຫລາຍ; ແລະ ໝາກ
ຂອງມັນເຮົາຈະເກັບມັນໄວ້ ເພື່ອລະດູການ
ໜ້າ ໃຫ້ຕົວຂອງເຮົາເອງ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້
ຂອງເພິ່ນວ່າ: ມານີ້, ແລ້ວພາກັນໄປບ່ອນ
ໄກທີ່ສຸດຂອງສວນອະງຸ່ນ, ແລະ ແນມເບິ່ງ
ວ່າງ່າເດີມຂອງຕົ້ນໄມ້ມີໝາກຫລາຍຄືກັນ
ບໍ່, ເພື່ອເຮົາຈະໄດ້ເກັບໝາກຂອງມັນໄວ້
ເພື່ອລະດູການໜ້າ ໃຫ້ຕົວເຮົາເອງ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງ
ສອງໄດ້ອອກໄປຫາບ່ອນທີ່ເພິ່ນເຊື່ອງງ່າ
ເດີມຂອງຕົ້ນໄມ້ນັ້ນໄວ້, ແລະ ເພິ່ນໄດ້ກ່າວ
ກັບຄົນໃຊ້ວ່າ: ຈົ່ງເບິ່ງ, ສິ່ງເຫລົ່ານີ້; ແລະ
ເຂົາເຫັນ [ກ]ຕົ້ນທຳອິດທີ່ເປັນໝາກ, ແລະ
ເຂົາເຫັນວ່າມັນດີ. ແລະ ເພິ່ນໄດ້ກ່າວອີກ
ວ່າ: ຈົ່ງເອົາໝາກຂອງມັນໄວ້ ເພື່ອລະດູ
ການໜ້າ, ເພື່ອເຮົາຈະຮັກສາມັນໄວ້ໃຫ້ຕົວ
ເຮົາເອງ; ເພາະຈົ່ງເບິ່ງ, ພຣະອົງໄດ້ກ່າວ
ວ່າ, ເຮົາບຳລຸງຮັກສາມັນເປັນເວລາດົນ
ນານມາແລ້ວ, ແລະ ມັນເປັນໝາກຫລາຍ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ໃຊ້ໄດ້ທູນຖາມເຈົ້ານາຍຂອງຕົນວ່າ: ເປັນ
ຫຍັງທ່ານຈຶ່ງມາປູກຕົ້ນໄມ້ນີ້, ຫລື ງ່ານີ້ໄວ້
ບ່ອນນີ້? ເພາະຈົ່ງເບິ່ງ, ມັນເປັນບ່ອນທີ່ບໍ່ດີ
ທີ່ສຸດໃນທີ່ດິນທັງໝົດຂອງສວນອະງຸ່ນ.
22 ແລະ ເຈົ້ານາຍຂອງສວນອະງຸ່ນໄດ້
ກ່າວກັບເຂົາວ່າ: ຢ່າໄດ້ແນະນຳເຮົາເລີຍ;
ເຮົາຮູ້ແລ້ວວ່າ ບ່ອນນີ້ເປັນບ່ອນບໍ່ດີ; ດັ່ງ
ນັ້ນເຮົາກ່າວກັບເຈົ້າວ່າ, ເຮົາໄດ້ບຳລຸງມັນ
ມາເປັນເວລາດົນນານແລ້ວ, ແລະ ເຈົ້າເອງ
ກໍເຫັນວ່າມັນເປັນໝາກຢ່າງຫລວງຫລາຍ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້
ຂອງເພິ່ນວ່າ: ເບິ່ງນີ້ແມ; ຈົ່ງເບິ່ງວ່າ ເຮົາໄດ້
ປູກອີກງ່າໜຶ່ງຂອງຕົ້ນໄມ້ອີກ; ແລະ ເຈົ້າ
ຮູ້ວ່າດິນບ່ອນນີ້ຂີ້ຮ້າຍກວ່າບ່ອນທຳອິດ.
ແຕ່ຈົ່ງເບິ່ງ, ເຮົາໄດ້ບຳລຸງມັນເປັນເວລາ
ດົນນານ, ແລະ ມັນເປັນໝາກຢ່າງຫລວງ
ຫລາຍ; ສະນັ້ນ, ຈົ່ງເຕົ້າໂຮມມັນ ແລະ ມ້ຽນ
ໄວ້ ເພື່ອລະດູການໜ້າ, ເພື່ອເຮົາຈະໄດ້ຮັກ
ສາມັນໄວ້ໃຫ້ຕົວເຮົາເອງ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້
ຂອງເພິ່ນອີກວ່າ: ເບິ່ງນີ້ແມ, ແລະ ຈົ່ງເບິ່ງ
ອີກ [ກ]ງ່າໜຶ່ງທີ່ເຮົາໄດ້ປູກໄວ້ອີກ; ຈົ່ງເບິ່ງ
ວ່າ ເຮົາໄດ້ບຳລຸງມັນມາຫລາຍແລ້ວ, ແລະ
ມັນກໍເປັນໝາກຢ່າງຫລວງຫລາຍ.
25 ແລະ ເພິ່ນໄດ້ກ່າວກັບຄົນໃຊ້ວ່າ: ເບິ່ງ
ນີ້ແມ ແລະ ຈົ່ງເບິ່ງຕົ້ນສຸດທ້າຍ. ຈົ່ງເບິ່ງ,
ຕົ້ນນີ້ເຮົາປູກໄວ້ໃນດິນບ່ອນ [ກ]ດີ; ແລະ
ເຮົາໄດ້ບຳລຸງມັນເປັນເວລາດົນນານ, ແລະ

17 *ກ* ຢຣ 15:16.
20 *ກ* ຢຄ 5:39.
24 *ກ* ອຊກ 17:22–24; ແອວ 16:17; 3 ນຟ 15:21–24.
25 *ກ* 1 ນຟ 2:20.

ມີພຽງສ່ວນໜຶ່ງເທົ່ານັ້ນທີ່ມີໝາກຫວານ,
ແລະ [ຂ]ອີກສ່ວນໜຶ່ງກາຍເປັນໝາກຂົມ; ຈົ່ງ
ເບິ່ງ, ເຮົາໄດ້ບຳລຸງມັນຄືກັນກັບຕົ້ນອື່ນໆ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້
ຂອງເພິ່ນວ່າ: ຈົ່ງຫັກງ່າທີ່ບໍ່ເປັນ [ກ]ໝາກດີ
ແລະ ໂຍນມັນເຂົ້າກອງໄຟເສຍ.
27 ແຕ່ຈົ່ງເບິ່ງ, ຄົນໃຊ້ໄດ້ກ່າວກັບເພິ່ນ
ວ່າ: ໃຫ້ພວກເຮົາລິງ່າມັນ ແລະ ພວນດິນ
ອ້ອມຕົ້ນມັນເພື່ອບຳລຸງ ຮັກສາມັນຕໍ່ໄປຈັກ
ໜ້ອຍເຖີດ ເພື່ອວ່າມັນອາດຈະເປັນໝາກ
ດີໃຫ້ທ່ານ, ເພື່ອທ່ານຈະເກັບມັນໄວ້ ເພື່ອ
ລະດູການໜ້າໄດ້.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນກັບຄົນໃຊ້ຂອງເຈົ້າ
ນາຍຂອງສວນອະງຸ່ນ ໄດ້ບຳລຸງໝາກໄມ້
ທັງໝົດຂອງສວນອະງຸ່ນນັ້ນ.
29 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ເວລາດົນນານຜ່ານໄປ, ແລະ ເຈົ້ານາຍ
ຂອງສວນອະງຸ່ນໄດ້ກ່າວກັບ [ກ]ຄົນໃຊ້ຂອງ
ເພິ່ນວ່າ: ມານີ້, ໃຫ້ພວກເຮົາລົງໄປໃນ
ສວນອະງຸ່ນນຳກັນເທາະ, ເພື່ອພວກເຮົາ
ຈະໄດ້ເຮັດວຽກໃນສວນອະງຸ່ນອີກ. ເພາະ
ຈົ່ງເບິ່ງ, [ຂ]ເວລາໃກ້ເຂົ້າມາແລ້ວ ແລະ [ຄ]ທີ່
ສຸດກໍຈະມາເຖິງໃນບໍ່ຊ້ານີ້; ດັ່ງນັ້ນ, ເຮົາ
ຕ້ອງເກັບໝາກໄມ້ໄວ້ ເພື່ອລະດູການໜ້າ
ໃຫ້ຕົວເຮົາເອງ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນກັບຄົນໃຊ້ໄດ້ພາກັນ
ລົງໄປໃນສວນອະງຸ່ນ; ແລະ ທັງສອງມາ
ເຖິງຕົ້ນທີ່ງ່າເດີມຂອງມັນຖືກຫັກອອກໄປ
ແລະ ເອົາງ່າປ່າມາຕໍ່ເຂົ້າໄວ້; ແລະ ຈົ່ງເບິ່ງ,
ໝາກຜົນ [ກ]ຊະນິດຕ່າງໆໄດ້ກີດຂວາງຕົ້ນ.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ຊີມລົດຊາດຂອງ
ໝາກໄມ້ທຸກຊະນິດ ຕາມຈຳນວນຂອງ
ມັນ. ແລະ ເຈົ້ານາຍຂອງສວນອະງຸ່ນໄດ້
ກ່າວວ່າ: ຈົ່ງເບິ່ງ, ພວກເຮົາບຳລຸງຕົ້ນນີ້
ເປັນເວລາດົນນານ, ແລະ ເຮົາໄດ້ເກັບເອົາ
ໝາກຂອງມັນໄວ້ຫລາຍພໍສົມຄວນ ເພື່ອ
ລະດູການໜ້າ ໃຫ້ຕົວເຮົາເອງ.
32 ແຕ່ ຈົ່ງ ເບິ່ງ, ເທື່ອນີ້ມັນເປັນໝາກ
ຫລາຍ ແຕ່ [ກ]ບໍ່ມີໜ່ວຍດີ, ແລະ ຈົ່ງເບິ່ງ
ໝາກໄມ້ທຸກຊະນິດບໍ່ມີໜ່ວຍດີເລີຍ; ແລະ
ມັນບໍ່ມີປະໂຫຍດແກ່ເຮົາຈັກດີ້ ເຖິງແມ່ນ
ວ່າພວກເຮົາໄດ້ລົງແຮງທັງໝົດ; ແລະ ບັດ
ນີ້ມັນເຮັດໃຫ້ເຮົາໂສກເສົ້າທີ່ຈະສູນເສຍ
ຕົ້ນໄມ້ເຫລົ່ານີ້ໄປ.
33 ແລະ ເຈົ້ານາຍຂອງສວນອະງຸ່ນໄດ້
ກ່າວກັບຄົນໃຊ້ວ່າ: ພວກເຮົາຈະເຮັດແນວ
ໃດກັບຕົ້ນໄມ້ນີ້, ເພື່ອເຮົາຈະຮັກສາໝາກ
ໜ່ວຍດີຂອງມັນໄວ້ໃຫ້ຕົວເຮົາເອງ?
34 ແລະ ຄົນໃຊ້ໄດ້ກ່າວກັບເຈົ້ານາຍວ່າ:
ຈົ່ງເບິ່ງເຖີດ ເພາະທ່ານໄດ້ເອົາງ່າຕົ້ນໝາກ
ກອກປ່າຕໍ່ງ່າເຂົ້າໄວ້, ມັນຈຶ່ງບຳລຸງຮາກ
ເພື່ອມັນຈະມີຊີວິດຢູ່ ແລະ ບໍ່ຕາຍ; ດັ່ງນັ້ນ
ທ່ານຈຶ່ງເຫັນວ່າມັນຍັງດີ.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້
ຂອງເພິ່ນວ່າ: ຕົ້ນນີ້ບໍ່ມີປະໂຫຍດຫຍັງ
ແກ່ເຮົາເລີຍ, ແລະ ຮາກຂອງມັນກໍບໍ່ມີປະ
ໂຫຍດຫຍັງແກ່ເຮົາເລີຍຕາບໃດທີ່ມັນຍັງ
ເປັນໝາກບໍ່ດີ.
36 ແຕ່ເຖິງຢ່າງໃດກໍຕາມ, ເຮົາຍັງຮູ້ວ່າ

25 *ຂ* 3 ນຟ 10:12–13.
26 *ກ* ມທ 7:15–20; ແອວ 5:36; ຄພ 97:7.
29 *ກ* ຄພ 101:55; 103:21.
*ຂ* ຄມພ ຍຸກສຸດທ້າຍ.
*ຄ* 2 ນຟ 30:10; ຢຄ 6:2.
30 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
32 *ກ* ຈສ—ປ 1:19.

ຮາກຂອງມັນດີ, ແລະ ເພື່ອຈຸດປະສົງຂອງ
ເຮົາເອງ ເຮົາຈຶ່ງຮັກສາມັນໄວ້; ແລະ ເພາະ
ຄວາມແຂງແຮງຂອງມັນ, ມັນຈຶ່ງເປັນໝາກ
ດີຈາກງ່າໄມ້ປ່າ.
37 ແຕ່ຈົ່ງເບິ່ງ, ງ່າໄມ້ປ່າໃຫຍ່ຂຶ້ນ ແລະ
ບຽດຮາກຂອງມັນ ແລະ ງ່າໄມ້ປ່າ [ກ]ມີກຳ
ລັງແຮງກວ່າຮາກຂອງມັນ, ມັນຈຶ່ງເປັນ
ໝາກບໍ່ດີຫລາຍ; ແລະ ເພາະວ່າມັນເປັນ
ໝາກບໍ່ດີ, ເຈົ້າຈຶ່ງເຫັນວ່າມັນເລີ່ມຕາຍ;
ແລະ ໃນທີ່ສຸດມັນກໍຈະສຸກຈົນວ່າຖືກໂຍນ
ເຂົ້າໄປໃນກອງໄຟ ຖ້າຫາກພວກເຮົາບໍ່
ເຮັດແນວໃດແນວໜຶ່ງກັບມັນເພື່ອຮັກສາ
ມັນໄວ້.
38 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວກັບຄົນ
ໃຊ້ຂອງເພິ່ນວ່າ: ໃຫ້ພວກເຮົາພາກັນລົງ
ໄປບ່ອນໄກທີ່ສຸດຂອງສວນອະງຸ່ນເທາະ,
ແລະ ແນມເບິ່ງວ່າງ່າເດີມຂອງມັນອອກ
ໝາກບໍ່ດີຄືກັນຫລືບໍ່.
39 ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງ
ສອງໄດ້ລົງໄປບ່ອນໄກທີ່ສຸດຂອງສວນ
ອະງຸ່ນ. ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ທັງສອງໄດ້ເຫັນໝາກໄມ້ຈາກງ່າເດີມ
ກັບມາເສຍຫາຍຄືກັນ; ແທ້ຈິງແລ້ວ, ຕົ້ນ
[ກ]ທຳອິດ ແລະ ຕົ້ນທີສອງເຖິງຕົ້ນສຸດທ້າຍ;
ແລະ ທັງໝົດກັບເສຍຫາຍໄປໝົດ.
40 ແລະ ໝາກໄມ້ [ກ]ປ່າຂອງຕົ້ນສຸດທ້າຍ
ມີກຳລັງເໜືອກວ່າພາກສ່ວນຂອງຕົ້ນທີ່
ອອກໝາກດີ ຈົນວ່າງ່າໄດ້ຫ່ຽວແຫ້ງ ແລະ
ໄດ້ຕາຍໄປ.
41 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ຮ້ອງໄຫ້ ແລະ
ກ່າວກັບຄົນໃຊ້ວ່າ: ເຮົາຈະເຮັດ [ກ]ແນວໃດ
ອີກກັບສວນອະງຸ່ນຂອງເຮົາ?
42 ຈົ່ງເບິ່ງ, ເຮົາຮູ້ວ່າໝາກໄມ້ທັງໝົດໃນ
ສວນອະງຸ່ນເສຍຫາຍໄປໝົດ, ຍົກເວັ້ນແຕ່
ໝາກໄມ້ເຫລົ່ານີ້. ແລະ ແຕ່ກ່ອນມັນເຄີຍ
ເປັນໝາກດີ ແລ້ວບັດນີ້ມັນກັບກາຍມາ
ເສຍຫາຍໄປນຳກັນໝົດ; ແລະ ບັດນີ້ຕົ້ນ
ໄມ້ທຸກຕົ້ນໃນສວນອະງຸ່ນ ບໍ່ເປັນປະໂຫຍດ
ຫຍັງໝົດ ນອກຈາກຈະຖືກໂຄ່ນລົງ ແລະ
ໂຍນເຂົ້າກອງໄຟ.
43 ແລະ ຈົ່ງເບິ່ງ ຕົ້ນສຸດທ້າຍນີ້ງ່າຂອງ
ມັນໄດ້ຫ່ຽວແຫ້ງ, ເຮົາໄດ້ປູກມັນໄວ້ໃນດິນ
ບ່ອນ [ກ]ດີ; ແທ້ຈິງແລ້ວ, ເປັນບ່ອນທີ່ເຮົາ
ເລືອກໄວ້ກ່ອນບ່ອນອື່ນໆທັງໝົດໃນສວນ
ອະງຸ່ນຂອງເຮົາ.
44 ແລະ ເຈົ້າກໍເຫັນວ່າເຮົາໄດ້ຕັດຕົ້ນຊຶ່ງ
[ກ]ກີດຂວາງທີ່ດິນບ່ອນນີ້ລົງອີກ ເພື່ອເຮົາ
ຈະໄດ້ປູກຕົ້ນນີ້ລົງແທນ.
45 ແລະ ເຈົ້າກໍເຫັນແລ້ວວ່າ ສ່ວນໜຶ່ງ
ຂອງມັນເປັນໝາກດີ, ແລະ ອີກສ່ວນໜຶ່ງ
ເກີດເປັນໝາກປ່າ; ແລະ ເພາະວ່າເຮົາບໍ່
ໄດ້ຫັກງ່າຂອງມັນໂຍນເຂົ້າກອງໄຟ, ຈົ່ງ
ເບິ່ງ, ມັນຈຶ່ງມີກຳລັງເໜືອກວ່າງ່າດີ ຈົນວ່າ
ງ່າດີໄດ້ຫ່ຽວແຫ້ງໄປນຳ.
46 ແລະ ບັດນີ້, ຈົ່ງເບິ່ງທັງໆທີ່ພວກເຮົາ
ເອົາໃຈໃສ່ເບິ່ງແຍງເປັນຢ່າງດີກັບສວນ
ອະງຸ່ນຂອງເຮົາ, ຕົ້ນໄມ້ໃນສວນຍັງເສຍ
ຫາຍຈົນວ່າບໍ່ເປັນໝາກດີ, ແລະ ເຮົາຫວັງ
ວ່າຈະຮັກສາຕົ້ນເຫລົ່ານີ້ໄວ້ເພື່ອເກັບໝາກ
ຂອງມັນໄວ້ ເພື່ອລະດູການໜ້າ ໃຫ້ຕົວເຮົາ
ເອງ. ແຕ່ຈົ່ງເບິ່ງ, ມັນກັບເປັນເໝືອນຕົ້ນ
ໝາກກອກປ່າໄປໝົດ ແລະ ມັນບໍ່ມີຄຸນຄ່າ
ເລີຍເວັ້ນເສຍແຕ່ຈະຖືກ [ກ]ໂຄ່ນລົງ ແລະ
ໂຍນເຂົ້າກອງໄຟ; ແລະ ມັນເຮັດໃຫ້ເຮົາ

37 *ກ* ຄພ 45:28–30.
39 *ກ* ຢຄ 5:20, 23, 25.
40 *ກ* ມມ 6:6–18.
41 *ກ* 2 ນຟ 26:24.
43 *ກ* 2 ນຟ 1:5.
44 *ກ* ອທ 13:20–21.
46 *ກ* 3 ນຟ 27:11.

ໂສກເສົ້າທີ່ຈະສູນເສຍຕົ້ນໄມ້ເຫລົ່ານີ້.
47 ເຮົາຈະເຮັດແນວໃດຕື່ມອີກໃນສວນ
ອະງຸ່ນຂອງເຮົາ? ເຮົາບໍ່ເຄີຍວາງມືຂອງເຮົາ
ລົງທີ່ບໍ່ໄດ້ບຳລຸງມັນບໍ? ບໍ່ເລີຍ, ເຮົາໄດ້ບຳ
ລຸງມັນ ແລະ ພວນດິນອ້ອມຕົ້ນມັນ, ແລະ
ເຮົາລິງ່າມັນ, ແລະ ເຮົາໃສ່ປຸຍມັນ, ແລະ
ເຮົາໄດ້ [ກ]ເດ່ມືຂອງເຮົາອອກໄປເກືອບ
ຕະຫລອດທັງວັນ, ແລະ [ຂ]ທີ່ສຸດເລື່ອນເຂົ້າ
ມາໃກ້ແລ້ວ, ແລະ ເປັນການໂສກເສົ້າທີ່
ເຮົາຈະໄດ້ໂຄ່ນຕົ້ນໄມ້ທຸກຕົ້ນລົງ ໃນສວນ
ອະງຸ່ນຂອງເຮົາ, ແລະ ໂຍນມັນເຂົ້າກອງ
ໄຟເພື່ອໃຫ້ມັນໄໝ້ເສຍ. ແມ່ນຜູ້ໃດເຮັດໃຫ້
ສວນອະງຸ່ນຂອງເຮົາເສຍຫາຍ?
48 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ໃຊ້ໄດ້ກ່າວກັບເຈົ້ານາຍຂອງຕົນວ່າ: ບໍ່
ແມ່ນຄວາມທະເຍີທະຍານຂອງສວນ
ອະງຸ່ນຂອງທ່ານບໍ—ງ່າຂອງມັນແຂງແຮງ
ກວ່າຮາກຂອງມັນບໍ? ແລະ ເພາະວ່າງ່າ
ຂອງມັນແຂງແຮງກວ່າຮາກຂອງມັນ; ຈົ່ງ
ເບິ່ງ ມັນຈຶ່ງໃຫຍ່ໄວກວ່າຄວາມແຂງແຮງ
ຂອງຮາກມັນ ຈຶ່ງເລີ່ມແຂງແຮງເອງ. ຈົ່ງ
ເບິ່ງ, ຂ້ານ້ອຍເວົ້າວ່າ ນີ້ບໍ່ແມ່ນສາເຫດໃຫ້
ຕົ້ນໄມ້ໃນສວນອະງຸ່ນຂອງທ່ານເສຍຫາຍ
ໄປບໍ?
49 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້
ຂອງເພິ່ນວ່າ: ໃຫ້ພວກເຮົາລົງໄປໃນສວນ
ອະງຸ່ນເທາະ ແລ້ວໂຄ່ນຕົ້ນໄມ້ລົງ ແລະ
ໂຍນມັນເຂົ້າກອງໄຟເສຍ ເພື່ອມັນຈະບໍ່
ໄດ້ກີດຂວາງທີ່ດິນໃນສວນອະງຸ່ນຂອງ
ເຮົາ, ເພາະເຮົາໄດ້ເຮັດກັບມັນໝົດທຸກຢ່າງ
ແລ້ວ. ເຮົາຈະເຮັດແນວໃດອີກກັບສວນ
ອະງຸ່ນຂອງເຮົາໄດ້?
50 ແຕ່ຈົ່ງເບິ່ງ, ຄົນໃຊ້ໄດ້ກ່າວກັບເຈົ້າ
ນາຍຂອງສວນອະງຸ່ນວ່າ: ຂໍໃຫ້ທ່ານຈົ່ງ
ປ່ອຍປະມັນໄວ້ຈັກ [ກ]ຊົ່ວໄລຍະໜຶ່ງກ່ອນ
ເຖີດ.
51 ແລະ ເຈົ້ານາຍໄດ້ກ່າວວ່າ: ແທ້ຈິງ
ແລ້ວ, ເຮົາຈະປະມັນໄວ້ຊົ່ວໄລຍະໜຶ່ງ,
ເພາະມັນຈະເຮັດໃຫ້ເຮົາໂສກເສົ້າໃນການ
ສູນເສຍຕົ້ນໄມ້ໃນສວນອະງຸ່ນຂອງເຮົາ.
52 ດັ່ງນັ້ນ, ໃຫ້ພວກເຮົາເອົາ [ກ]ງ່າຂອງ
ຕົ້ນເຫລົ່ານີ້ ທີ່ພວກເຮົາປູກໄວ້ບ່ອນໄກທີ່
ສຸດຂອງສວນອະງຸ່ນຂອງເຮົາ ແລະ ໃຫ້ຕໍ່
ງ່າມັນເຂົ້າກັບຕົ້ນເກົ່າຂອງມັນ; ແລະ ໃຫ້
ພວກເຮົາຫັກເອົາງ່າເຫລົ່ານັ້ນອອກຈາກ
ຕົ້ນຊຶ່ງໝາກຂອງມັນຂົມທີ່ສຸດ ແລະ ເອົາ
ກິ່ງເດີມຂອງຕົ້ນຕໍ່ງ່າເຂົ້າແທນ.
53 ແລະ ເຮົາຈະເຮັດແນວນີ້ເພື່ອຕົ້ນ
ມັນຈະບໍ່ຕາຍ, ຊຶ່ງເຮົາອາດຈະຮັກສາຮາກ
ຂອງມັນໄວ້ໃຫ້ເຮົາໄດ້ ເພື່ອຈຸດປະສົງຂອງ
ເຮົາເອງ.
54 ເພາະຈົ່ງເບິ່ງ, ຮາກຂອງງ່າເດີມຂອງ
ມັນທີ່ເຮົາປູກໄວ້ບ່ອນໃດກໍຕາມແລ້ວແຕ່
ເຮົາຕ້ອງການຍັງມີຊີວິດຢູ່; ດັ່ງນັ້ນ, ເພື່ອ
ເຮົາຈະຮັກສາມັນໄວ້ເພື່ອຈຸດປະສົງຂອງ
ເຮົາເອງ, ເຮົາຈະເອົາງ່າຂອງຕົ້ນໄມ້ນີ້ມາ,
ແລະ ເຮົາຈະ [ກ]ຕໍ່ງ່າເຂົ້າກັບງ່າເດີມຂອງ
ມັນ. ແທ້ຈິງແລ້ວ, ເຮົາຈະຕໍ່ງ່າຂອງຕົ້ນແມ່
ຂອງມັນເຂົ້າກັບມັນ ເພື່ອເຮົາຈະຮັກສາ
ຮາກມັນໄວ້ໃຫ້ເຮົາເອງ ເພື່ອວ່າ ເມື່ອມັນ
ຈະແຂງແຮງພໍ ມັນອາດຈະເປັນໝາກດີ
ໃຫ້ເຮົາ, ແລະ ເຮົາຍັງຈະມີລັດສະໝີພາບ
ດ້ວຍໝາກໃນສວນອະງຸ່ນຂອງເຮົາ.
55 ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງ
ສອງໄດ້ເອົາງ່າຈາກຕົ້ນເດີມ ຊຶ່ງກັບກາຍ

47 *ກ* 2 ນຟ 28:32;
ຢຄ 6:4.
*ຂ* ຄມພ ໂລກ—
ທີ່ສຸດຂອງໂລກ.
50 *ກ* ຢຄ 5:27.
52 *ກ* ຄມພ ອິດສະຣາເອນ—
ການເຕົ້າໂຮມຊາວ
ອິດສະຣາເອນ.
54 *ກ* 1 ນຟ 15:12–16.

ເປັນຕົ້ນປ່າໄປ, ແລະ ຕໍ່ງ່າເຂົ້າກັບຕົ້ນເດີມ
ທັງຫລາຍ, ຊຶ່ງກັບກາຍເປັນຕົ້ນປ່າໄປແລ້ວ
ນຳກັນ.

56 ແລະ ທັງ ສອງ ເອົາ ງ່າ ຈາກ ຕົ້ນ ເດີມ
ຊຶ່ງກັບເປັນຕົ້ນປ່າໄປແລ້ວ ແລະ ຕໍ່ງ່າເຂົ້າ
ກັບຕົ້ນແມ່ຂອງມັນ.

57 ແລະ ເຈົ້ານາຍຂອງສວນອະງຸ່ນໄດ້
ກ່າວກັບຄົນໃຊ້ວ່າ: ຢ່າໄດ້ຫັກງ່າປ່າອອກ
ຈາກຕົ້ນມັນເລີຍ, ນອກຈາກວ່າງ່າໃດທີ່
ເປັນໝາກຂົມທີ່ສຸດ; ແລະ ເຈົ້າຈົ່ງຕໍ່ງ່າເຂົ້າ
ກັບມັນຕາມທີ່ເຮົາກ່າວໄວ້.

58 ແລະ ພວກເຮົາຈະບຳລຸງຕົ້ນໄມ້ໃນ
ສວນອະງຸ່ນອີກ, ແລະ ພວກເຮົາຈະຕັດ
ແປງງ່າຂອງມັນ; ແລະ ພວກເຮົາຈະຫັກງ່າ
ສຸກເຫລົ່ານັ້ນ ຊຶ່ງຕ້ອງຕາຍອອກຈາກຕົ້ນ
ແລະ ໂຍນມັນເຂົ້າໃນກອງໄຟ.

59 ແລະ ເຮົາເຮັດແນວນີ້ ເພື່ອຮາກຂອງ
ມັນອາດຈະມີກຳລັງເພາະຄວາມດີຂອງ
ມັນ; ແລະ ເພາະການປ່ຽນງ່າຂອງມັນ,
ເພື່ອຄວາມດີຈະຊະນະຄວາມຊົ່ວ.

60 ແລະ ເພາະວ່າເຮົາຮັກສາງ່າເດີມ
ແລະ ຮາກຂອງມັນໄວ້ ແລະ ວ່າເຮົາໄດ້
ເອົາງ່າເດີມຕໍ່ງ່າເຂົ້າກັບຕົ້ນແມ່ອີກ ແລະ
ຮັກສາຮາກຕົ້ນແມ່ຂອງມັນເພື່ອຕົ້ນໃນ
ສວນອະງຸ່ນຂອງເຮົາອາດຈະເປັນ [ກ]ໝາກ
ດີອີກ; ແລະ ເພື່ອເຮົາຈະໄດ້ມີຄວາມສຸກ
ອີກດ້ວຍໝາກໄມ້ໃນສວນອະງຸ່ນຂອງເຮົາ
ແລະ ເພື່ອເຮົາອາດຈະປິຕິຍິນດີຢ່າງຍິ່ງທີ່
ເຮົາໄດ້ຮັກສາຮາກ ແລະ ງ່າຂອງໝາກທຳ
ອິດໄວ້—

61 ດັ່ງ ນັ້ນ, ຈົ່ງ ໄປ ເຖີດ, ແລະ ຮ້ອງ
[ກ]ພວກ ຄົນໃຊ້ມາ ເພື່ອພວກເຮົາຈະໄດ້
[ຂ]ເຮັດ ວຽກ ງານ ຢ່າງພາກ ພຽນ ໃນສວນ
ອະງຸ່ນດ້ວຍກຳລັງເພື່ອພວກເຮົາຈະໄດ້
ຕຽມທາງໄວ້ ເພື່ອເຮົາຈະໄດ້ນຳເອົາໝາກ
ເດີມອອກມາອີກ ຊຶ່ງໝາກເດີມນັ້ນດີ ແລະ
ມີຄຸນຄ່າຫລາຍກວ່າໝ່ວຍອື່ນໆທັງໝົດ.

62 ດັ່ງນັ້ນ, ໃຫ້ພວກເຮົາພາກັນໄປເຖີດ
ເພື່ອຈະໄດ້ອອກແຮງດ້ວຍກຳລັງຂອງພວກ
ເຮົາເປັນເທື່ອສຸດທ້າຍ, ເພາະຈົ່ງເບິ່ງທີ່ສຸດ
ໃກ້ເຂົ້າມາແລ້ວ, ແລະ ນີ້ເປັນເທື່ອສຸດທ້າຍ
ທີ່ເຮົາຈະລິງ່າໃນສວນອະງຸ່ນຂອງເຮົາ.

63 ຈົ່ງຕໍ່ງ່າໄມ້ເຂົ້າກັນ; ຈົ່ງເລີ່ມຈາກຕົ້ນ
[ກ]ສຸດທ້າຍເພື່ອມັນຈະໄດ້ເປັນຕົ້ນທຳອິດ,
ແລະ ຕົ້ນທຳອິດຈະໄດ້ເປັນຕົ້ນສຸດທ້າຍ,
ແລະ ຈົ່ງພວນດິນຮອບ ທັງຕົ້ນແກ່ ແລະ
ຕົ້ນອ່ອນ, ທັງຕົ້ນທຳອິດແລະ ຕົ້ນສຸດທ້າຍ;
ແລະ ທັງຕົ້ນສຸດທ້າຍ ແລະ ຕົ້ນທຳອິດ,
ເພື່ອທຸກຕົ້ນຈະໄດ້ຮັບການບຳລຸງຮັກສາ
ອີກເປັນເທື່ອສຸດທ້າຍ.

64 ດັ່ງ ນັ້ນ, ຈົ່ງພວນ ດິນ ຮອບ ຕົ້ນ ມັນ,
ແລະ ລິງ່າມັນ, ແລະ ໃສ່ປຸຍອີກເປັນເທື່ອ
ສຸດທ້າຍ, ເພາະວ່າທີ່ສຸດໃກ້ເຂົ້າມາແລ້ວ.
ແລະ ຖ້າຫາກເປັນໄປວ່າ ງ່າໄມ້ເຫລົ່ານີ້ທີ່
ເຮົາຫາກໍຕໍ່ງ່າເຂົ້າກັນຈະເຕີບໂຕຂຶ້ນ, ແລະ
ອອກໝາກເດີມ, ເມື່ອນັ້ນເຈົ້າຈົ່ງຕຽມທາງ
ໄວ້ໃຫ້ມັນເພື່ອມັນຈະໄດ້ເຕີບໂຕຂຶ້ນ.

65 ແລະ ຂະນະທີ່ມັນເລີ່ມເຕີບໂຕຂຶ້ນ
ເຈົ້າຈົ່ງຕັດງ່າທີ່ເປັນໝາກຂົມອອກຕາມ
ຄວາມແຂງແຮງຂອງງ່າດີ ແລະ ຂະໜາດ
ຂອງມັນ; ແລະ ເຈົ້າຢ່າໄດ້ຕັດງ່າບໍ່ດີ [ກ]ອອກ
ໝົດບາດດຽວ, ຢ້ານວ່າຮາກຂອງມັນຈະ
ແຂງແຮງເກີນໄປສຳລັບງ່າທີ່ຫາກໍຕໍ່ໃສ່,
ແລະ ງ່າທີ່ຫາກໍຕໍ່ໃສ່ນັ້ນຈະຕາຍ, ແລະ ເຮົາ
ຈະສູນເສຍຕົ້ນຂອງສວນອະງຸ່ນຂອງເຮົາ.

66 ເພາະມັນເຮັດໃຫ້ເຮົາໂສກເສົ້າທີ່ຈະ
ສູນເສຍຕົ້ນຂອງສວນອະງຸ່ນຂອງເຮົາ; ດັ່ງ
ນັ້ນ, ຈົ່ງຕັດງ່າບໍ່ດີອອກ ຕາບໃດທີ່ງ່າດີ

60 ກ ອຊຍ 27:6.
61 ກ ຢຄ 6:2; ຄພ 24:19.
ຂ ຄພ 39:11, 13, 17.
63 ກ 1 ນຟ 13:42;
ອທ 13:10–12.
65 ກ ຄພ 86:6–7.

ໃຫຍ່ຂຶ້ນ ເພື່ອຮາກກັບຍອດຈະໄດ້ມີກຳລັງເທົ່າກັນ, ຈົນງ່າດີຈະມີກຳລັງເໜືອກວ່າງ່າບໍ່ດີ, ແລະ ງ່າບໍ່ດີຈະຖືກໂຄ່ນລົງ ແລະ ໂຍນເຂົ້າກອງໄຟ, ເພື່ອຈະບໍ່ໄດ້ເປັນສິ່ງກີດຂວາງທີ່ດິນຂອງສວນອະງຸ່ນຂອງເຮົາ; ແລະ ໂດຍວິທີນີ້ ເຮົາຈະກວາດງ່າບໍ່ດີອອກຈາກສວນອະງຸ່ນຂອງເຮົາ.

67 ສ່ວນງ່າຂອງຕົ້ນເດີມນັ້ນ ເຮົາຈະຕໍ່ງ່າເຂົ້າກັບຕົ້ນເດີມຄືນຄືເກົ່າ;

68 ແລະ ງ່າຂອງຕົ້ນເດີມ ເຮົາຈະຕໍ່ງ່າເຂົ້າກັບງ່າເດີມຂອງຕົ້ນມັນ; ແລະ ໂດຍວິທີນີ້ ເຮົາຈະເອົາມັນມາລວມກັນອີກ; ເພື່ອວ່າມັນຈະອອກໝາກເດີມ ແລະ ມັນຈະເປັນອັນໜຶ່ງດຽວກັນ.

69 ແລະ ໝາກບໍ່ດີຈະຖືກ [ກ]ໂຍນຖິ້ມ, ແທ້ຈິງແລ້ວ, ໃຫ້ມັນອອກຈາກທີ່ດິນທັງໝົດໃນສວນອະງຸ່ນຂອງເຮົາ; ເພາະຈົ່ງເບິ່ງ, ເຮົາຈະລິງ່າໃນສວນອະງຸ່ນຂອງເຮົາພຽງເທື່ອດຽວເທົ່ານັ້ນ.

70 ແລະ ເຫດການໄດ້ບັງເກີດຂຶ້ນຄືພຣະຜູ້ເປັນເຈົ້າຂອງສວນອະງຸ່ນໄດ້ສົ່ງ [ກ]ຄົນໃຊ້ຂອງພຣະອົງໃຫ້ອອກໄປ; ແລະ ຄົນໃຊ້ໄດ້ປະຕິບັດຕາມທີ່ພຣະຜູ້ເປັນເຈົ້າບັນຊາເຂົາ, ແລະ ນຳຄົນໃຊ້ຜູ້ອື່ນມາ; ແລະ ພວກເຂົາມີຈຳນວນພຽງ [ຂ]ເລັກໜ້ອຍ.

71 ແລະ ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວກັບພວກຄົນໃຊ້ວ່າ: ຈົ່ງໄປ ແລະ ອອກ [ກ]ແຮງງານໃນສວນອະງຸ່ນດ້ວຍກຳລັງຂອງພວກເຈົ້າ. ເພາະຈົ່ງເບິ່ງ, ນີ້ເປັນ [ຂ]ເທື່ອສຸດທ້າຍທີ່ເຮົາຈະບຳລຸງສວນອະງຸ່ນຂອງເຮົາ; ເພາະທີ່ສຸດໃກ້ຈະມາເຖິງແລ້ວ; ແລະ ລະດູການຈະມາເຖິງຢ່າງວ່ອງໄວ; ແລະ ຖ້າຫາກ ພວກເຈົ້າອອກແຮງດ້ວຍກຳລັງຂອງພວກເຈົ້າຮ່ວມກັບເຮົາແລ້ວ ພວກເຈົ້າຈະມີ [ຄ]ຄວາມສຸກ ໃນໝາກໄມ້ ຊຶ່ງເຮົາຈະເກັບໄວ້ ເພື່ອລະດູການໜ້າ ໃຫ້ຕົວເຮົາເອງ ຊຶ່ງຈະມາເຖິງໃນບໍ່ຊ້ານີ້.

72 ແລະ ເຫດການໄດ້ບັງເກີດຂຶ້ນຄືພວກຄົນໃຊ້ໄດ້ອອກໄປ ແລະ ອອກແຮງງານດ້ວຍກຳລັງຂອງຕົນ; ແລະ ເຈົ້ານາຍຂອງສວນອະງຸ່ນໄດ້ອອກແຮງງານຮ່ວມກັບພວກເຂົາ; ແລະ ພວກເຂົາໄດ້ເຊື່ອຟັງພຣະບັນຍັດຂອງເຈົ້ານາຍຂອງສວນອະງຸ່ນທຸກປະການ.

73 ແລະ ໝາກເດີມເລີ່ມເກີດຂຶ້ນໃນສວນອະງຸ່ນອີກ; ແລະ ງ່າເດີມກໍເລີ່ມເຕີບໂຕ ແລະ ງອກງາມຢ່າງຍິ່ງ; ແລະ ງ່າປ່າເລີ່ມຖືກຫັກອອກ ແລະ ໂຍນຖິ້ມ; ແລະ ພວກເຂົາໄດ້ຮັກສາຮາກ ແລະ ຍອດຂອງມັນໄວ້ສະເໝີກັນ, ຕາມຄວາມແຂງແຮງຂອງມັນ.

74 ແລະ ພວກເຂົາໄດ້ອອກແຮງດ້ວຍສຸດຄວາມພາກພຽນຕາມຄຳບັນຊາຂອງເຈົ້ານາຍຂອງສວນອະງຸ່ນ ຈົນວ່າອັນບໍ່ດີຖືກໂຍນຖິ້ມອອກນອກສວນອະງຸ່ນ, ແລະ ເຈົ້ານາຍໄດ້ຮັກສາໄວ້ໃຫ້ເພິ່ນເອງຈົນວ່າຕົ້ນກັບເປັນໝາກເດີມອີກ; ແລະ ມັນກັບເປັນເໝືອນຕົ້ນ [ກ]ດຽວກັນ ແລະ ມີໝາກເທົ່າກັນ; ແລະ ເຈົ້ານາຍຂອງສວນອະງຸ່ນໄດ້ຮັກສາໝາກເດີມ, ຊຶ່ງມີຄ່າທີ່ສຸດຕໍ່ເພິ່ນມາຕັ້ງແຕ່ຕົ້ນໄວ້ໃຫ້ເພິ່ນເອງ.

75 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອເຈົ້ານາຍຂອງສວນອະງຸ່ນເຫັນວ່າໝາກໄມ້ຂອງເພິ່ນດີ, ແລະ ເຫັນວ່າສວນອະງຸ່ນ

69 ກ 1 ນຟ 22:15–17, 23; 2 ນຟ 30:9–10.
70 ກ ຄພ 101:55; 103:21.
ຂ 1 ນຟ 14:12.
71 ກ ມທ 21:28; ຢຄ 6:2–3; ຄພ 33:3–4.
ຂ ຄພ 39:17; 43:28–30.
ຄ ຄພ 18:10–16.
74 ກ ຄພ 38:27.

ຂອງເພິ່ນບໍ່ເສຍຫາຍອີກຕໍ່ໄປແລ້ວ, ເພິ່ນ
ໄດ້ເອີ້ນຄົນໃຊ້ຂອງເພິ່ນມາຫາ ແລະ ໄດ້
ກ່າວກັບພວກເຂົາວ່າ: ຈົ່ງເບິ່ງ, ພວກເຮົາ
ໄດ້ບຳລຸງສວນອະງຸ່ນຂອງເຮົາເປັນເທື່ອ
ສຸດທ້າຍ; ແລະ ພວກເຈົ້າເຫັນວ່າເຮົາເຮັດ
ໄປຕາມຄວາມປະສົງຂອງເຮົາ; ແລະ ເຮົາ
ໄດ້ຮັກສາໝາກເດີມຂອງມັນໄວ້ຈົນມັນດີ
ເໝືອນດັ່ງແຕ່ກ່ອນ. ແລະ ພວກເຈົ້າ [ກ]ເປັນ
ສຸກແລ້ວ; ເພາະເນື່ອງດ້ວຍວ່າພວກເຈົ້າ
ອອກແຮງງານຢ່າງພາກພຽນກັບເຮົາໃນ
ສວນອະງຸ່ນຂອງເຮົາ, ແລະ ຮັກສາບັນຍັດ
ຂອງເຮົາເປັນຢ່າງດີ, ແລະ ນຳເອົາ [ຂ]ໝາກ
ເດີມມາໃຫ້ເຮົາອີກ, ຈົນສວນອະງຸ່ນຂອງ
ເຮົາບໍ່ເສຍຫາຍອີກຕໍ່ໄປ, ແລະ ງ່າໃດທີ່ບໍ່ດີ
ກໍຖືກໂຍນຖິ້ມໝົດ, ຈົ່ງເບິ່ງ ພວກເຈົ້າຈະມີ
ຄວາມສຸກກັບເຮົາແລ້ວເພາະໝາກໄມ້ໃນ
ສວນອະງຸ່ນຂອງເຮົາ.
76 ເພາະ ຈົ່ງເບິ່ງ, ເຮົາຈະເກັບໝາກ
ໄມ້ໃນສວນອະງຸ່ນໄວ້ໃຫ້ຕົວເຮົາເອງເປັນ
ເວລາ [ກ]ຍາວນານເພື່ອລະດູການໜ້າ, ຊຶ່ງ
ຈະມາເຖິງຢ່າງວ່ອງໄວ; ແລະ ເຮົາໄດ້
ບຳລຸງສວນອະງຸ່ນຂອງເຮົາເປັນເທື່ອສຸດ
ທ້າຍ, ແລະ ລິງ່າ, ແລະ ພວນດິນຮອບຕົ້ນ
ໄມ້, ແລະ ໃສ່ປຸຍ; ດັ່ງນັ້ນ, ເຮົາຈະເກັບ
ໝາກໄມ້ໄວ້ໃຫ້ເຮົາເປັນເວລາຍາວນານ
ຕາມທີ່ເຮົາໄດ້ເວົ້າໄວ້.
77 ແລະ ເມື່ອເວລາມາເຖິງ ໝາກບໍ່ດີຈະ
ເກີດໃນສວນອະງຸ່ນຂອງເຮົາອີກ, ເມື່ອນັ້ນ
ເຮົາຈະເອົາໝາກດີ ແລະ ໝາກບໍ່ດີມາໂຮມ
ກັນ; ແລະ ເຮົາຈະຮັກສາໝາກດີໄວ້ໃຫ້ຕົວ
ເຮົາເອງ, ແລະ ເຮົາຈະໂຍນໝາກທີ່ບໍ່ດີຖິ້ມ
ໄວ້ໃນບ່ອນຂອງມັນເອງ. ແລະ ເມື່ອນັ້ນ
[ກ]ລະດູການ ແລະ ທີ່ສຸດຍ່ອມມາເຖິງ; ແລະ
ເຮົາຈະເຮັດໃຫ້ສວນອະງຸ່ນຂອງເຮົາ [ຂ]ໄໝ້
ດ້ວຍໄຟ.

## ບົດທີ 6

*ພຣະຜູ້ເປັນເຈົ້າຈະນຳອິດສະຣາເອນຄືນມາໃນຍຸກສຸດທ້າຍ—ໂລກຈະຖືກເຜົາຜານດ້ວຍໄຟ—ມະນຸດຕ້ອງຕິດຕາມພຣະຄຣິດເພື່ອຫລີກເວັ້ນທະເລໄຟ ແລະ ມາດ. ປະມານ 544–421 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ຈົ່ງເບິ່ງພີ່ນ້ອງຂອງຂ້າພະ
ເຈົ້າ, ເໝືອນດັ່ງຂ້າພະເຈົ້າໄດ້ເວົ້າກັບພວກ
ທ່ານມາແລ້ວວ່າ ຂ້າພະເຈົ້າຈະທຳນາຍ,
ຈົ່ງເບິ່ງ, ນີ້ຄືຄຳທຳນາຍຂອງຂ້າພະເຈົ້າ—
ວ່າສິ່ງທີ່ສາດສະດາ [ກ]ຊີນັດໄດ້ເວົ້າກ່ຽວກັບ
ເຊື້ອສາຍອິດສະຣາເອນ, ຊຶ່ງເລື່ອງທີ່ເພິ່ນ
ໄດ້ປຽບທຽບພວກເຂົາເໝືອນດັ່ງຕົ້ນໝາກ
ກອກເທດໃນສວນຈະຕ້ອງເກີດຂຶ້ນຢ່າງ
ແນ່ນອນ.
2 ແລະ ວັນທີ່ພຣະອົງຈະວາງພຣະຫັດ
ລົງເປັນເທື່ອທີສອງເພື່ອນຳຜູ້ຄົນຂອງພຣະ
ອົງ [ກ]ກັບມາໃນວັນນັ້ນ, ແທ້ຈິງແລ້ວ, ເປັນ
ເທື່ອສຸດທ້າຍທີ່ [ຂ]ພວກຄົນໃຊ້ຂອງພຣະຜູ້
ເປັນເຈົ້າຈະອອກໄປດ້ວຍ [ຄ]ອຳນາດຂອງ
ພຣະອົງເພື່ອ [ງ]ບຳລຸງ ແລະ ລິງ່າໄມ້ໃນ
ສວນ [ຈ]ອະງຸ່ນຂອງພຣະອົງ; ແລະ ຫລັງ
ຈາກນັ້ນ [ສ]ທີ່ສຸດຍ່ອມມາເຖິງໃນບໍ່ຊ້ານີ້.

75 *ກ* 1 ນຟ 13:37.
*ຂ* ຄມພ ອິດສະຣາເອນ.
76 *ກ* 1 ນຟ 22:24–26.
ຄມພ ພັນປີ.
77 *ກ* ພນມ 20:2–10;
ຄພ 29:22–24;
43:29–33; 88:110–116.
*ຂ* ຄມພ ໂລກ—ທີ່
ສຸດຂອງໂລກ.
**6** 1 *ກ* ຢຄ 5:1.
2 *ກ* 1 ນຟ 22:10–12;
ຄພ 110:11.
ຄມພ ການຟື້ນຟູ
ພຣະກິດຕິຄຸນ.
*ຂ* ຢຄ 5:61.
*ຄ* 1 ນຟ 14:14.
*ງ* ຢຄ 5:71.
*ຈ* ຄມພ ສວນອະງຸ່ນຂອງ
ພຣະຜູ້ເປັນເຈົ້າ.
*ສ* 2 ນຟ 30:10.

3 ແລະ ຜູ້ ທີ່ ອອກ ແຮງ ງານ ຢ່າງ ພາກ
ພຽນໃນສວນອະງຸ່ນຂອງເພິ່ນ ຈະມີຄວາມ
ສຸກພຽງໃດ; ແລະ ຜູ້ທີ່ຈະຖືກຂັບໄລ່ໄປຫາ
ບ່ອນຂອງຕົນຈະຖືກສາບແຊ່ງຫລາຍພຽງ
ໃດ! ແລະ ໂລກນີ້ຈະຖືກ [ກ]ເຜົາຜານດ້ວຍ
ໄຟ.

4 ແລະ ພຣະເຈົ້າຂອງພວກເຮົາເມດຕາ
ຕໍ່ພວກເຮົາພຽງໃດ, ເພາະພຣະອົງລະນຶກ
ເຖິງເຊື້ອສາຍ [ກ]ອິດສະຣາເອນ; ທັງຮາກ
ແລະ ງ່າ; ແລະ ພຣະອົງ ໄດ້ ຍື່ນ [ຂ]ພຣະ
ຫັດຂອງພຣະອົງອອກ ໄປໃຫ້ ພວກ ເຂົາ
ຕະຫລອດທັງວັນ; ແລະ ພວກເຂົາເປັນຄົນ
ແຂງຄໍ ແລະ ມັກ [ຄ]ຂັດຄໍ; ແຕ່ຄົນທັງຫລາຍ
ທີ່ຈະບໍ່ເຮັດໃຈແຂງກະດ້າງຈະລອດໃນອາ
ນາຈັກຂອງພຣະເຈົ້າ.

5 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ຂ້າພະເຈົ້າວິງວອນພວກທ່ານດ້ວຍ
ຄຳທີ່ມີສະຕິສຳປະຊັນຍະ ໃຫ້ພວກທ່ານ
ກັບ ໃຈ ແລະ ມາດ້ວຍ ຈຸດປະສົງ ເຕັມທີ່
ແຫ່ງໃຈ, ແລະ [ກ]ໃກ້ຊິດຕິດແທດກັບພຣະ
ເຈົ້າເໝືອນດັ່ງພຣະອົງໃກ້ຊິດຕິດແທດກັບ
ພວກທ່ານ. ແລະ ຂະນະທີ່ [ຂ]ພຣະຫັດແຫ່ງ
ພຣະ ເມດຕາ ຂອງ ພຣະອົງ ຍັງ ເດ່ ມາຫາ
ພວກທ່ານຢູ່ໃນຄວາມສະຫວ່າງຂອງກາງ
ເວັນ, ຢ່າເຮັດໃຈແຂງກະດ້າງເລີຍ.

6 ແທ້ຈິງແລ້ວ, ມື້ນີ້ຖ້າຫາກພວກທ່ານໄດ້
ຍິນສຸລະສຽງຂອງພຣະອົງແລ້ວ, ກໍຢ່າເຮັດ
ໃຈແຂງກະດ້າງ; ເພາະເຫດໃດພວກທ່ານ
ຈະ [ກ]ຕາຍ?

7 ເພາະ ຈົ່ງ ເບິ່ງ, ຫລັງ ຈາກ ພວກ ທ່ານ
ໄດ້ ຮັບ ການ ບຳລຸງດ້ວຍພຣະຄຳອັນປະ
ເສີດຂອງພຣະເຈົ້າຕະຫລອດທັງວັນແລ້ວ,
ພວກທ່ານຍັງອອກໝາກບໍ່ດີຈົນວ່າພວກ
ທ່ານຕ້ອງຖືກ [ກ]ໂຄ່ນລົງ ແລະ ໂຍນເຂົ້າ
ກອງໄຟບໍ?

8 ຈົ່ງເບິ່ງ, ພວກທ່ານ ຈະ ປະ ຕິ ເສດ ຄຳ
ເຫລົ່າ ນີ້ ບໍ? ພວກ ທ່ານ ຈະ ປະ ຕິ ເສດ ຂໍ້
ຄວາມ ຂອງ ສາດສະດາບໍ? ແລະ ພວກ
ທ່ານຈະປະຕິເສດຂໍ້ຄວາມທັງໝົດ ຊຶ່ງໄດ້
ເວົ້າໄວ້ກ່ຽວກັບພຣະຄຣິດ, ຫລັງຈາກທີ່
ຫລາຍຄົນໄດ້ເວົ້າກ່ຽວກັບພຣະອົງ; ແລະ
ຈະ ປະ ຕິ ເສດ ພຣະ ຄຳ ອັນ ປະ ເສີດ ຂອງ
ພຣະ ຄຣິດ ແລະ ອຳນາດຂອງພຣະເຈົ້າ
ແລະ [ກ]ຂອງປະທານແຫ່ງພຣະວິນຍານບໍ
ລິສຸດ, ແລະ ຂັດຂືນພຣະວິນຍານສັກສິດ,
ແລະ ເຍາະເຍີ້ຍແຜນແຫ່ງການໄຖ່ອັນຍິ່ງ
ໃຫຍ່ຊຶ່ງກຳນົດໄວ້ໃຫ້ພວກທ່ານບໍ?

9 ພວກທ່ານຮູ້ບໍວ່າ ຖ້າຫາກພວກທ່ານ
ເຮັດ ສິ່ງ ເຫລົ່ານີ້ ອຳນາດ ແຫ່ງ ການ ໄຖ່
ແລະ ການ ຟື້ນ ຄືນ ຊີວິດ ຊຶ່ງ ມີ ຢູ່ ໃນ ພຣະ
ຄຣິດຈະນຳເອົາຕົວພວກທ່ານມາຢືນຢູ່
ດ້ວຍຄວາມອັບອາຍ ແລະ [ກ]ຄວາມຮູ້ສຶກ
ຜິດອັນເປັນຕາຢ້ານຕໍ່ໜ້າ [ຂ]ບ່ອນພິພາກ
ສາຂອງພຣະເຈົ້າ?

10 ແລະ ຕາມອຳນາດແຫ່ງ [ກ]ຄວາມຍຸດ
ຕິທຳ, ເພາະວ່າຄວາມຍຸດຕິທຳຈະຖືກປະ
ຕິເສດບໍ່ໄດ້, ພວກທ່ານຈະຕ້ອງອອກໄປສູ່
[ຂ]ທະເລໄຟ ແລະ ມາດ, ຊຶ່ງແປວຂອງມັນ

---

3 ກ 2 ນຟ 27:2;
ຢຄ 5:77;
3 ນຟ 25:1.
4 ກ 2 ຊມອ 7:24.
ຂ ຢຄ 5:47.
ຄ ມຊຢ 13:29.
5 ກ ຄມພ ເປັນອັນໜຶ່ງດຽວກັນ,
ຄວາມເປັນອັນໜຶ່ງດຽວກັນ.
ຂ ແອວ 5:33–34;
3 ນຟ 9:14.
6 ກ ອຊກ 18:21–23.
7 ກ ແອວ 5:51–52;
3 ນຟ 27:11–12.
8 ກ ຄມພ ຂອງປະທານແຫ່ງ
ພຣະວິນຍານບໍລິສຸດ.
9 ກ ມຊຢ 15:26.
ຄມພ ຮູ້ສຶກຜິດ,
ຄວາມຮູ້ສຶກຜິດ.
ຂ ຄມພ ພິພາກສາ, ການ
ພິພາກສາຄັ້ງສຸດທ້າຍ.
10 ກ ຄມພ ຍຸດຕິທຳ,
ຄວາມຍຸດຕິທຳ.
ຂ 2 ນຟ 28:23.
ຄມພ ນະລົກ.

ບໍ່ຮູ້ຈັກມອດ, ແລະ ຄວັນຂອງມັນຈະລອຍ
ຂຶ້ນ ຕະຫລອດການ ແລະ ຕະຫລອດໄປ,
ຊຶ່ງທະເລໄຟ ແລະ ມາດ ຄື [ຄ]ຄວາມທໍລະ
ມານ [ງ]ທີ່ບໍ່ມີວັນສິ້ນສຸດ.
11 ໂອ້ ຕໍ່ໄປນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ພວກທ່ານຈົ່ງກັບໃຈ, ແລະ ເຂົ້າມາໃນ
[ກ]ປະຕູທີ່ຄັບ ແລະ ດຳເນີນໄປຕາມເສັ້ນ
ທາງທີ່ແຄບ, ຈົນກະທັ້ງພວກທ່ານຈະໄດ້
ຮັບຊີວິດນິລັນດອນ.
12 ໂອ້ ຈົ່ງເປັນ [ກ]ຄົນສະຫລາດ, ຂ້າພະ
ເຈົ້າຈະເວົ້າຫຍັງໄດ້ຕື່ມອີກ?
13 ສຸດທ້າຍນີ້, ຂ້າພະເຈົ້າຂໍກ່າວຄຳອຳ
ລາພວກທ່ານ ຈົນວ່າຂ້າພະເຈົ້າຈະພົບ
ພວກທ່ານອີກຕໍ່ໜ້າບ່ອນພິພາກສາອັນໜ້າ
ພໍພຣະໄທຂອງພຣະເຈົ້າ, ຊຶ່ງບ່ອນພິພາກ
ສານັ້ນຈະສຽບແທງຄົນຊົ່ວດ້ວຍຄວາມສະ
ທ້ານ ຢ້ານກົວອັນ [ກ]ເປັນຕາຢ້ານ. ອາແມນ.

## ບົດທີ 7

*ເຊເຣັມປະຕິເສດພຣະຄຣິດ, ແລ້ວຖົກຖຽງກັບຢາໂຄບ, ຮຽກຮ້ອງຢາກເຫັນເຄື່ອງໝາຍ ແລະ ຖືກພຣະເຈົ້າລົງທັນ—ສາດສະດາທຸກທ່ານໄດ້ກ່າວເຖິງພຣະຄຣິດ ແລະ ການຊົດໃຊ້ຂອງພຣະອົງ—ຊາວນີໄຟດຳລົງຊີວິດເປັນຄົນຊັດເຊພະເນຈອນ, ເກີດຢູ່ນຳຄວາມທຸກຍາກລຳບາກ, ແລະ ຖືກຊາວເລມັນກຽດຊັງ. ປະມານ 544–421 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກບໍ່ເທົ່າໃດປີຜ່ານໄປ, ມີຊາຍຜູ້
ໜຶ່ງທີ່ມີຊື່ວ່າ ເຊເຣັມ ຢູ່ໃນບັນດາຜູ້ຄົນຂອງ
ນີໄຟ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ເລີ່ມສັ່ງສອນຢູ່ໃນບັນດາຜູ້ຄົນ ແລະ
ປະກາດກັບພວກນັ້ນວ່າ ຈະບໍ່ມີພຣະ
ຄຣິດ. ແລະ ລາວໄດ້ສັ່ງສອນອີກຫລາຍ
ເລື່ອງ ຊຶ່ງຍົກຍ້ອງບຸກຄົນ; ແລະ ສິ່ງນີ້
ລາວເຮັດໄປເພື່ອຈະລົ້ມເລີກຄຳສອນຂອງ
ພຣະຄຣິດ.
3 ແລະ ລາວອອກແຮງຢ່າງພາກພຽນ
ເພື່ອຊັກຈູງໃຈຂອງຜູ້ຄົນໄປ, ເຖິງຂະໜາດ
ທີ່ລາວໄດ້ຊັກຈູງໃຈຫລາຍດວງໄປ; ແລະ
ໂດຍທີ່ລາວຮູ້ຈັກວ່າຂ້າພະເຈົ້າຢາໂຄບ
ມີສັດທາໃນພຣະຄຣິດຜູ້ຈະສະເດັດມາ,
ລາວຈຶ່ງພະຍາຍາມຫາໂອກາດເພື່ອຈະໄດ້
ມາຫາຂ້າພະເຈົ້າ.
4 ແລະ ລາວເປັນຄົນມີການສຶກສາ, ຈົນ
ວ່າມີຄວາມຮູ້ເລື່ອງພາສາຂອງຜູ້ຄົນໄດ້
ຢ່າງສົມບູນ; ດັ່ງນັ້ນ, ລາວຈຶ່ງໃຊ້ຄຳຍົກ
ຍ້ອງ, ແລະ ໃຊ້ອຳນາດໃນການເວົ້າຕາມ
ອຳນາດຂອງມານ.
5 ແລະ ລາວຫວັງໄວ້ວ່າ ຈະເຮັດໃຫ້ຂ້າ
ພະເຈົ້າຫວັ່ນໄຫວຈາກສັດທາ, ທັງທີ່ມີ
[ກ]ການເປີດເຜີຍຫລາຍຢ່າງ ແລະ ຫລາຍ
ເລື່ອງ ຊຶ່ງຂ້າພະເຈົ້າໄດ້ເຫັນມາແລ້ວກ່ຽວ
ກັບສິ່ງເຫລົ່ານີ້; ເພາະຂ້າພະເຈົ້າໄດ້ເຫັນ
ເຫລົ່າທູດມາແລ້ວແທ້ໆ, ແລະ ພຣະອົງໄດ້
ປະຕິບັດສາດສະໜາກິດແກ່ຂ້າພະເຈົ້າ.
ແລະ ຂ້າພະເຈົ້າໄດ້ຍິນສຸລະສຽງຂອງພຣະ
ຜູ້ເປັນເຈົ້າຮັບສັ່ງກັບຂ້າພະເຈົ້າເປັນຄຳ
ເວົ້າເປັນບາງຄັ້ງ; ດັ່ງນັ້ນ, ສິ່ງເຫລົ່ານີ້ຈະ
ເຮັດໃຫ້ຂ້າພະເຈົ້າຫວັ່ນໄຫວບໍ່ໄດ້.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ມາຫາຂ້າພະເຈົ້າ ແລະ ໄດ້ເວົ້າກັບຂ້າ
ພະເຈົ້າວ່າ: ອ້າຍຢາໂຄບເອີຍ ເຮົາຫາໂອ

---

10 ຄ ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
ງ ຄພ 19:10–12.
11 ກ 2 ນຟ 9:41.
12 ກ ມມ 9:28.
13 ກ ແອວ 40:14.
7 5 ກ 2 ນຟ 11:3; ຢຄ 2:11.

ກາດມາຫລາຍເທື່ອແລ້ວ ທີ່ຈະເວົ້າກັບເຈົ້າ
ເພາະ ວ່າເຮົາໄດ້ ຍິນ ແລະ ຮູ້ຈັກ ວ່າ ເຈົ້າ
ເປັນຄົນໄປມາເລື້ອຍໆ ເພື່ອສັ່ງສອນເລື່ອງ
ທີ່ເຈົ້າເອີ້ນວ່າ ພຣະກິດຕິຄຸນ ຫລື ຄຳສອນ
ຂອງພຣະຄຣິດ.
7 ແລະ ເຈົ້າໄດ້ພາຜູ້ຄົນພວກນີ້ໄປ ບິດ
ເບືອນຈາກເສັ້ນທາງອັນ ຖືກ ຕ້ອງຂອງ
ພຣະເຈົ້າ, ແລະ ບໍ່ [ກ]ຮັກສາກົດຂອງໂມເຊ
ຊຶ່ງເປັນທາງທີ່ຖືກຕ້ອງ; ແລະ ເຈົ້າໄດ້ປ່ຽນ
ແປງກົດຂອງໂມເຊໃຫ້ເປັນການນະມັດ
ສະການຄົນຜູ້ໜຶ່ງ ຊຶ່ງເຈົ້າກ່າວວ່າຈະມາ
ພາຍໃນຫລາຍຮ້ອຍປີນັບແຕ່ນີ້ໄປ. ແລະ
ບັດນີ້ຈົ່ງເບິ່ງ, ເຮົາເຊເຣັມຂໍເວົ້າກັບເຈົ້າ
ວ່າ ມັນເປັນການໝິ່ນປະໝາດ; ເພາະວ່າ
ບໍ່ມີຜູ້ໃດຮູ້ເລື່ອງນີ້ເລີຍ; ເພາະເຂົາ [ຂ]ບໍ່ສາ
ມາດບອກໄດ້ວ່າແມ່ນຫຍັງຈະເກີດຂຶ້ນ.
ແລະ ເຊເຣັມໄດ້ເວົ້າຂັດແຍ້ງກັບຂ້າພະ
ເຈົ້າແບບນີ້.
8 ແຕ່ຈົ່ງເບິ່ງ, ອົງພຣະຜູ້ເປັນເຈົ້າໄດ້ເທ
ພຣະວິນຍານຂອງພຣະອົງເຂົ້າສູ່ [ກ]ຈິດວິນ
ຍານຂອງຂ້າພະເຈົ້າ, ເຖິງຂະໜາດທີ່ຂ້າ
ພະເຈົ້າເຮັດໃຫ້ເຊເຣັມຍອມຈຳນົນໃນຄຳ
ເວົ້າທັງໝົດຂອງລາວ.
9 ແລະ ຂ້າພະເຈົ້າໄດ້ຖາມລາວວ່າ: ເຈົ້າ
ປະຕິເສດພຣະຄຣິດຜູ້ຈະສະເດັດມາບໍ?
ແລະ ລາວໄດ້ຕອບວ່າ: ຖ້າຫາກຈະເປັນ
ພຣະຄຣິດແລ້ວ, ເຮົາຈະບໍ່ປະຕິເສດພຣະ
ອົງ; ແຕ່ເຮົາຮູ້ວ່າບໍ່ມີພຣະຄຣິດ, ທັງບໍ່ເຄີຍ
ມີ, ແລະ ຈະບໍ່ມີເລີຍ.
10 ແລະ ຂ້າພະເຈົ້າໄດ້ຖາມລາວວ່າ:
ເຈົ້າເຊື່ອພຣະຄຳພີບໍ? ແລະ ລາວຕອບວ່າ,
ເຊື່ອ.
11 ແລະ ຂ້າພະເຈົ້າໄດ້ເວົ້າກັບລາວວ່າ:
ຖ້າເປັນແນວນັ້ນ ເຈົ້າກໍບໍ່ເຂົ້າໃຈ; ເພາະ
ມັນ ໄດ້ໃຫ້ຖ້ອຍຄຳໄວ້ແທ້ໆ ເຖິງ ພຣະ
ຄຣິດ. ຈົ່ງເບິ່ງ, ເຮົາເວົ້າກັບເຈົ້າວ່າ ບໍ່ມີ
ສາດສະດາຄົນໃດທີ່ບັນທຶກໄວ້ ຫລື [ກ]ທຳ
ນາຍໄວ້ນອກຈາກເພິ່ນເຫລົ່ານັ້ນໄດ້ເວົ້າ
ກ່ຽວກັບພຣະຄຣິດອົງນີ້.
12 ແລະ ນີ້ຍັງບໍ່ໝົດ—ສິ່ງທີ່ປະກົດຕໍ່
ເຮົາ, ເພາະວ່າເຮົາໄດ້ຍິນ; ແລະ ໄດ້ເຫັນ
ສິ່ງນີ້ທີ່ສະແດງໃຫ້ປະຈັກແກ່ເຮົາ ໂດຍ
[ກ]ອຳນາດຂອງພຣະວິນຍານບໍລິສຸດ; ດັ່ງ
ນັ້ນ, ເຮົາຈຶ່ງຮູ້ວ່າ ຖ້າຫາກຈະບໍ່ມີການຊົດ
ໃຊ້ເກີດຂຶ້ນແລ້ວ ມະນຸດທັງປວງຍ່ອມຕ້ອງ
[ຂ]ຫາຍຍະນະ.
13 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ລາວໄດ້ເວົ້າກັບຂ້າພະເຈົ້າວ່າ: ຈົ່ງສະແດງ
[ກ]ເຄື່ອງໝາຍໃຫ້ເຮົາເຫັນເບິ່ງດູໂດຍ
ອຳນາດຂອງພຣະວິນຍານບໍລິສຸດຊຶ່ງເຈົ້າຮູ້
ຈັກມາຫລາຍແລ້ວ.
14 ແລະ ຂ້າພະເຈົ້າ ໄດ້ ເວົ້າ ກັບ ລາວ
ວ່າ: ເຮົາເປັນຄົນແນວໃດ ເຮົາບໍ່ຈຳເປັນ
ທີ່ຈະທົດລອງພຣະເຈົ້າອີກໃຫ້ສະແດງ
ເຄື່ອງໝາຍໃນເລື່ອງທີ່ເຈົ້າກໍຮູ້ຢູ່ດີວ່າມັນ
ເປັນ [ກ]ຄວາມຈິງ? ເຈົ້າຍັງປະຕິເສດເພາະ
ເຈົ້າເປັນຂອງ [ຂ]ມານ. ເຖິງຢ່າງໃດກໍຕາມ,
ກໍບໍ່ແມ່ນຄວາມປະສົງຂອງເຮົາ; ແຕ່ຖ້າ

---

7 *ກ* ຢຄ 4:5.
*ຂ* ແອວ 30:13.
8 *ກ* ຄມພ ດົນໃຈ, ການດົນໃຈ.
11 *ກ* ພນມ 19:10; 1 ນຟ 10:5; ຢຄ 4:4; ມຊຢ 13:33–35; ຄພ 20:26.
ຄມພ ພຣະເຢຊູຄຣິດ.
12 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະວິນຍານບໍລິສຸດ; ພຣະວິນຍານບໍລິສຸດ.
*ຂ* 2 ນຟ 2:21.
13 *ກ* ມທ 16:1–4; ແອວ 30:43–60.
ຄມພ ເຄື່ອງໝາຍ.
14 *ກ* ແອວ 30:41–42.
*ຂ* ແອວ 30:53.
ຄມພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.

ຫາກວ່າພຣະເຈົ້າລົງໂທດເຈົ້າ, ກໍຂໍໃຫ້ສິ່ງ
ນັ້ນເປັນເຄື່ອງໝາຍແກ່ເຈົ້າວ່າ ພຣະອົງມີ
ອຳນາດທັງໃນສະຫວັນ ແລະ ໃນແຜ່ນດິນ
ໂລກ; ແລະ ວ່າພຣະຄຣິດຈະສະເດັດມາ
ອີກ. ແລະ ໂອ້ ພຣະຜູ້ເປັນເຈົ້າ, ຂໍໃຫ້ເປັນ
ໄປຕາມພຣະປະສົງຂອງພຣະອົງເຖີດ,
ແລະ ບໍ່ແມ່ນຂອງຂ້ານ້ອຍ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເມື່ອຂ້າພະເຈົ້າຢາໂຄບໄດ້ເວົ້າຂໍ້ຄວາມນີ້
ແລ້ວ, ອຳນາດຂອງພຣະຜູ້ເປັນເຈົ້າໄດ້ມາ
ສູ່ລາວ, ເຖິງຂະໜາດທີ່ລາວຕ້ອງລົ້ມລົງ
ຢູ່ກັບພື້ນດິນ. ແລະ ເຫດການໄດ້ບັງເກີດ
ຂຶ້ນຄື ລາວໄດ້ຮັບການບຳລຸງເປັນເວລາ
ຫລາຍມື້.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ລາວໄດ້ເວົ້າກັບຜູ້ຄົນວ່າ ຈົ່ງມາຫ້ອມໂຮມ
ກັນໃນມື້ອື່ນ ເພາະວ່າເຮົາຈະຕາຍແລ້ວ;
ດັ່ງນັ້ນ, ເຮົາປາດຖະໜາຈະກ່າວກັບຜູ້ຄົນ
ກ່ອນເຮົາຈະຕາຍ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ ຝູງຊົນໄດ້ມາຫ້ອມໂຮມກັນ ແລະ
ລາວໄດ້ເວົ້າກັບຄົນເຫລົ່ານັ້ນຢ່າງແຈ່ມ
ແຈ້ງ ແລະ ປະຕິເສດເລື່ອງທີ່ລາວໄດ້ສິດ
ສອນນັ້ນ ແລະ ສາລະພາບວ່າມີພຣະຄຣິດ
ແລະ ອຳນາດຂອງພຣະວິນຍານບໍລິສຸດ
ແລະ ການປະຕິບັດສາດສະໜາກິດຂອງ
ເຫລົ່າທູດ.
18 ແລະ ລາວໄດ້ເວົ້າກັບຄົນເຫລົ່ານັ້ນ
ຢ່າງແຈ່ມແຈ້ງວ່າ, ລາວຖືກອຳນາດຂອງ
[ກ]ມານມາ [ຂ]ຫລອກລວງ. ແລະ ລາວໄດ້ເວົ້າ
ເຖິງນະລົກ, ແລະ ເຖິງຊົ່ວນິລັນດອນ, ແລະ
ເຖິງໂທດນິລັນດອນ.
19 ແລະ ລາວໄດ້ເວົ້າອີກວ່າ: ເຮົາຢ້ານ
ກົວວ່າ ເຮົາກະທຳ [ກ]ບາບທີ່ອະໄພໃຫ້ບໍ່ໄດ້
ເສຍແລ້ວ, ເພາະເຮົາໄດ້ຕົວະພຣະເຈົ້າ;
ແລະ ເພາະເຮົາໄດ້ປະຕິເສດພຣະຄຣິດ
ແລະ ກ່າວວ່າເຮົາເຊື່ອພຣະຄຳພີ; ແລະ
ພຣະຄຳພີໃຫ້ຖ້ອຍຄຳແທ້ໆເຖິງພຣະອົງ.
ແລະ ເພາະວ່າເຮົາເວົ້າຕົວະພຣະເຈົ້າ ດັ່ງ
ນັ້ນເຮົາຈຶ່ງຢ້ານກົວທີ່ສຸດວ່າ ກໍລະນີຂອງ
ເຮົາຈະ [ຂ]ໜ້າຢ້ານກົວຫລາຍທີ່ສຸດ; ແຕ່
ເຮົາກໍສາລະພາບຕໍ່ພຣະເຈົ້າແລ້ວ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ລາວໄດ້ກ່າວຂໍ້ຄວາມນີ້ແລ້ວ ລາວເວົ້າ
ຫຍັງບໍ່ໄດ້ ແລະ ລາວກໍ [ກ]ໝົດວິນຍານໄປ.
21 ແລະ ເມື່ອຝູງຊົນເຫັນວ່າ ລາວໄດ້
ເວົ້າເລື່ອງເຫລົ່ານີ້ໃນຂະນະທີ່ກຳລັງຈະ
ໝົດວິນຍານ, ພວກເຂົາກໍແປກໃຈຢ່າງຍິ່ງ;
ເຖິງຂະໜາດທີ່ອຳນາດຂອງພຣະເຈົ້າໄດ້
ສະເດັດລົງມາເທິງພວກເຂົາ, ແລະ ພວກ
ເຂົາໄດ້ [ກ]ໝົດກຳລັງຈົນລົ້ມລົງຢູ່ກັບພື້ນ
ດິນ.
22 ບັດນີ້, ສິ່ງເຫລົ່ານີ້ເປັນສິ່ງທີ່ພໍໃຈຕໍ່
ຂ້າພະເຈົ້າຢາໂຄບເພາະວ່າຂ້າພະເຈົ້າໄດ້
ທູນຂໍຈາກພຣະບິດາຂອງຂ້າພະເຈົ້າຜູ້ປະ
ທັບຢູ່ສະຫວັນ; ເພາະພຣະອົງໄດ້ຍິນສຽງ
ຮ້ອງຂໍຂອງຂ້າພະເຈົ້າ ແລະ ໄດ້ຕອບຄຳ
ອະທິຖານຂອງຂ້າພະເຈົ້າແລ້ວ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ສັນ
ຕິສຸກ ແລະ ຄວາມຮັກຂອງພຣະເຈົ້າໄດ້ກັບ
ຄືນມາຢູ່ໃນບັນດາຜູ້ຄົນອີກ; ແລະ ພວກ
ເຂົາໄດ້ [ກ]ຄົ້ນຄວ້າພຣະຄຳພີ ແລະ ບໍ່ເຊື່ອ
ຟັງຄຳເວົ້າຂອງຄົນຊົ່ວຜູ້ນີ້ອີກຕໍ່ໄປ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ວິທີ
ການຫລາຍຢ່າງໄດ້ຖືກຄິດຄົ້ນຂຶ້ນເພື່ອ [ກ]ກູ້
ແລະ ນຳພາຊາວເລມັນກັບຄືນມາສູ່ເລື່ອງ

18 *ກ* ແອວ 30:53.
*ຂ* ຄມພ ມານ.
19 *ກ* ຄມພ ບາບທີ່ອະໄພ
ໃຫ້ບໍ່ໄດ້.
*ຂ* ມຊຢ 15:26.
20 *ກ* ຢມຢ 28:15–17.
21 *ກ* ແອວ 19:6.
23 *ກ* ແອວ 17:2.
24 *ກ* ອນ 1:20.

ຄວາມຈິງ; ແຕ່ທັງໝົດນີ້ [ຂ]ບໍ່ມີປະໂຫຍດ, ເພາະພວກເຂົາເບີກບານໃນການເຮັດ [ຄ]ສົງຄາມ ແລະ [ງ]ການນອງເລືອດ, ແລະ ພວກເຂົາມີ [ຈ]ຄວາມກຽດຊັງພວກເຮົາ, ພີ່ນ້ອງຂອງພວກເຂົາຢ່າງບໍ່ສິ້ນສຸດ. ແລະ ພວກເຂົາພະຍາຍາມທຳລາຍພວກເຮົາເລື້ອຍໄປດ້ວຍອຳນາດອາວຸດຂອງພວກເຂົາ.

25 ດັ່ງນັ້ນ, ຜູ້ຄົນຂອງນີໄຟຈຶ່ງໄດ້ເສີມກຳລັງຕໍ່ຕ້ານພວກນັ້ນດ້ວຍກຳລັງທັບຂອງພວກເຂົາ ແລະ ດ້ວຍສຸດຄວາມສາມາດຂອງພວກເຂົາໂດຍວາງໃຈໃນພຣະເຈົ້າ ແລະ [ກ]ຫີນ ແຫ່ງຄວາມລອດຂອງພວກເຂົາ; ດັ່ງນັ້ນ, ເຖິງບັດນີ້ພວກເຂົາກໍຍັງເປັນຜູ້ຊະນະສັດຕູຂອງພວກເຂົາ.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າຢາໂຄບກໍໄດ້ເຖົ້າແກ່ລົງ ແລະ ບັນທຶກຂອງຜູ້ຄົນພວກນີ້ໄດ້ຮັກສາໄວ້ໃນ [ກ]ແຜ່ນຈາລຶກອື່ນໆຂອງນີໄຟ, ດັ່ງນັ້ນ, ຂ້າພະເຈົ້າເຮັດບັນທຶກຕາມຄວາມຮູ້ທີ່ດີທີ່ສຸດຂອງຂ້າພະເຈົ້າ, ມີຄວາມວ່າ ເວລາຜ່ານໄປພ້ອມກັບພວກເຮົາ, ແລະ [ຂ]ຊີວິດຂອງພວກເຮົາຜ່ານໄປ ຄືກັບວ່າ ເໝືອນເປັນຄວາມຝັນຂອງພວກເຮົາ, ພວກເຮົາເປັນຄົນໂດດດ່ຽວ ແລະ ເຊັ່ງຂຶມ, ຊັດເຊພະເນຈອນ, ຖືກຂັບໄລ່ອອກຈາກເຢຣູຊາເລັມ, ເກີດຢູ່ກັບຄວາມທຸກຍາກລຳບາກໃນຖິ່ນແຫ້ງແລ້ງກັນດານ, ແລະ ຖືກພີ່ນ້ອງຂອງພວກເຮົາກຽດຊັງ, ເປັນເຫດໃຫ້ເກີດສົງຄາມ ແລະ ການຂັດແຍ້ງກັນ; ດັ່ງນັ້ນ ວັນເວລາຂອງພວກເຮົາຈຶ່ງມີແຕ່ຄວາມເປັນທຸກ.

27 ແລະ ຂ້າພະເຈົ້າຢາໂຄບເຫັນວ່າໃນບໍ່ຊ້ານີ້ ຂ້າພະເຈົ້າກໍຈະຕ້ອງລົງໄປສູ່ຫລຸມສົບຂອງຂ້າພະເຈົ້າແລ້ວ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ເວົ້າກັບ [ກ]ເອໂນດ ລູກຊາຍຂອງຂ້າພະເຈົ້າວ່າ: ຈົ່ງຮັບເອົາແຜ່ນຈາລຶກເຫລົ່ານີ້ໄວ້ ແລະ ຂ້າພະເຈົ້າໄດ້ບອກເຖິງເລື່ອງຕ່າງໆ ຊຶ່ງນີໄຟອ້າຍຂອງຂ້າພະເຈົ້າໄດ້ [ຂ]ສັ່ງ ແລະ ລາວສັນຍາວ່າຈະເຊື່ອຟັງຄຳສັ່ງ. ແລະ ຂ້າພະເຈົ້າຂໍຢຸດການບັນທຶກຂອງຂ້າພະເຈົ້າໄວ້ໃນແຜ່ນຈາລຶກເຫລົ່ານີ້, ຊຶ່ງການຂຽນມີຢູ່ເລັກໜ້ອຍເທົ່ານັ້ນ; ແລະ ຂ້າພະເຈົ້າຂໍກ່າວອຳລາຜູ້ອ່ານໂດຍຫວັງວ່າພີ່ນ້ອງຂອງຂ້າພະເຈົ້າ ຊຶ່ງເປັນຈຳນວນຫລວງຫລາຍຈະອ່ານຂໍ້ຄວາມຂອງຂ້າພະເຈົ້າ. ພີ່ນ້ອງເອີຍ, ຂໍພຣະເຈົ້າອວຍພອນ.

# ໜັງສືເອໂນດ

*ເອໂນດອະທິຖານຢ່າງສຸດກຳລັງ ແລະ ໄດ້ຮັບການປົດບາບຂອງລາວ—ສຸລະສຽງຂອງພຣະຜູ້ເປັນເຈົ້າ ໄດ້ເຂົ້າສູ່ຈິດໃຈຂອງລາວ ແລະ ໄດ້ໃຫ້ສັນຍາຄວາມລອດແກ່ຊາວເລມັນໃນອະນາຄົດ—ຊາວນີໄຟຊອກຫາເພື່ອກູ້ຊາວເລມັນກັບຄືນ—ເອໂນດມີຄວາມປິຕິຍິນດີໃນພຣະຜູ້ໄຖ່ຂອງລາວ. ປະມານ 420 ປີ ກ່ອນ ຄ.ສ.*

24 *ຂ* ອນ 1:14.
*ຄ* ມຊຢ 10:11–18.
*ງ* ຈຣ 1:6; ແອວ 26:23–25.
*ຈ* 2 ນຟ 5:1–3; ມຊຢ 28:2.
25 *ກ* ຄມພ ຫີນ.
26 *ກ* 1 ນຟ 19:1–6; ຈຣ 1:14–15. ຄມພ ແຜ່ນຈາລຶກ.
*ຂ* ຢກບ 4:14.
27 *ກ* ອນ 1:1.
*ຂ* ຢຄ 1:1–4.

1 ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າ ກເອໂນດໂດຍທີ່ຮູ້ ຈັກ ບິດາຂອງ
ຂ້າ ພະເຈົ້າວ່າ ຂເພິ່ນເປັນຄົນທ່ຽງ ທຳ—
ເພາະ ເພິ່ນ ຄໄດ້ ສິດ ສອນ ຂ້າ ພະເຈົ້າ ໃນ
ພາສາຂອງເພິ່ນ, ແລະ ໃນ ງການລ້ຽງດູ
ແລະ ການຕັກເຕືອນຂອງພຣະຜູ້ເປັນເຈົ້າ
ນຳອີກ—ແລະ ຂໍພຣະນາມຂອງພຣະເຈົ້າ
ຂອງຂ້າພະເຈົ້າຈົ່ງພຣະກະເສີມສຳລານ
ເພາະການນີ້ເຖີດ—
2 ແລະ ຂ້າພະເຈົ້າຈະບອກພວກທ່ານ
ເຖິງ ກປະສົບການ ຊຶ່ງຂ້າພະເຈົ້າມີຕໍ່ພຣະ
ພັກຂອງພຣະເຈົ້າ ກ່ອນທີ່ຂ້າພະເຈົ້າຈະ
ໄດ້ຮັບ ຂການປົດບາບຂອງຂ້າພະເຈົ້າ.
3 ຈົ່ງເບິ່ງ, ຂ້າພະເຈົ້າໄດ້ໄປລ່າສັດຢູ່
ໃນປ່າ; ແລະ ຄຳເວົ້າຊຶ່ງຂ້າພະເຈົ້າໄດ້ຍິນ
ຈາກບິດາເລື້ອຍໆກ່ຽວກັບຊີວິດນິລັນດອນ,
ແລະ ກຄວາມສຸກຂອງໄພ່ພົນຂອງພຣະ
ເຈົ້າໄດ້ ຂຝັງເລິກຢູ່ໃນໃຈຂອງຂ້າພະເຈົ້າ.
4 ແລະ ຈິດວິນຍານຂອງຂ້າພະເຈົ້າ
ກຫິວໂຫຍ; ແລະ ຂ້າພະເຈົ້າໄດ້ ຂຄຸເຂົ່າ
ລົງຕໍ່ພຣະພັກຂອງພຣະຜູ້ສ້າງຂອງຂ້າພະ
ເຈົ້າ, ແລະ ຂ້າພະເຈົ້າໄດ້ ຄອະທິຖານ ແລະ
ອ້ອນວອນຕໍ່ພຣະອົງຢ່າງສຸດກຳລັງເພື່ອ
ຈິດວິນຍານຂອງຂ້າພະເຈົ້າເອງ; ແລະ
ຕະຫລອດທັງວັນຂ້າພະເຈົ້າໄດ້ຮ້ອງທູນ
ພຣະອົງ; ແລະ ເມື່ອເຖິງຕອນກາງຄືນ ຂ້າ
ພະເຈົ້າກໍຍັງເປັ່ງສຽງຂອງຂ້າພະເຈົ້າຂຶ້ນ
ເຖິງຟ້າສະຫວັນ.
5 ແລະ ກສຸລະສຽງມາເຖິງຂ້າພະເຈົ້າ, ມີ
ຄວາມວ່າ: ເອໂນດ, ບາບຂອງເຈົ້າໄດ້ຮັບ
ການອະໄພໃຫ້ແລ້ວ, ແລະ ເຈົ້າຈະໄດ້ຮັບ
ພອນ.
6 ແລະ ຂ້າພະເຈົ້າເອໂນດຮູ້ວ່າພຣະເຈົ້າ
ຈະບໍ່ເວົ້າຕົວະ; ດັ່ງນັ້ນ, ຄວາມຜິດຂອງຂ້າ
ພະເຈົ້າຈຶ່ງຖືກກວາດລ້າງໄປ.
7 ແລະ ຂ້າພະເຈົ້າໄດ້ທູນຖາມວ່າ: ຂ້າ
ແດ່ພຣະອົງເຈົ້າ, ມັນເປັນໄປໄດ້ແນວໃດ?
8 ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າ
ວ່າ: ເພາະ ກສັດທາຂອງເຈົ້າໃນພຣະຄຣິດ,
ຜູ້ທີ່ເຈົ້າບໍ່ເຄີຍ ໄດ້ຍິນ ຫລື ໄດ້ເຫັນມາ
ກ່ອນ. ແລະ ຫລາຍປີຈະຜ່ານໄປກ່ອນທີ່
ພຣະອົງຈະສະແດງພຣະອົງເອງໃຫ້ປະຈັກ
ໃນເນື້ອໜັງ; ດັ່ງນັ້ນ, ຈົ່ງໄປເຖີດ, ສັດທາ
ຂອງເຈົ້າເຮັດໃຫ້ເຈົ້າ ຂບໍລິບູນແລ້ວ.
9 ບັດນີ້, ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຂ້າພະເຈົ້າໄດ້ຍິນຄຳນີ້ ຂ້າພະເຈົ້າເລີ່ມຮູ້
ສຶກມີ ກຄວາມປາດຖະໜາເພື່ອຄວາມຜາ
ສຸກຂອງຊາວນີໄຟ, ພີ່ນ້ອງຂອງຂ້າພະ
ເຈົ້າ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ ຂທຸ້ມເທ
ຈິດວິນຍານທັງໝົດຂອງຂ້າພະເຈົ້າໃຫ້ແກ່
ພຣະເຈົ້າເພື່ອພວກເຂົາ.
10 ແລະ ຂະນະທີ່ຂ້າພະເຈົ້າກຳລັງດີ້ນ
ຮົນຢູ່ໃນວິນຍານ, ຈົ່ງເບິ່ງ, ສຸລະສຽງຂອງ
ພຣະຜູ້ເປັນເຈົ້າໄດ້ເຂົ້າສູ່ ກຈິດໃຈຂ້າພະ

**1** 1ກ ຄມພ ເອໂນດ, ລູກ ຊາຍຂອງຢາໂຄບ.
ຂ 2 ນຟ 2:2–4.
ຄ 1 ນຟ 1:1–2.
ງ ອຟຊ 6:4.
2ກ ປຖກ 32:24–32; ແອວ 8:10. ຄມພ ກັບໃຈ, ການກັບໃຈ.
ຂ ຄມພ ປົດບາບ, ການປົດບາບ.
3ກ ຄມພ ຊື່ນຊົມ, ຄວາມຊື່ນຊົມ.
ຂ 1 ນຟ 10:17–19; ແອວ 36:17–21.
4ກ 2 ນຟ 9:51; 3 ນຟ 12:6.
ຂ ຄມພ ຄາລະວະ, ຄວາມຄາລະວະ.
ຄ ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
5ກ ຄມພ ເປີດເຜີຍ, ການເປີດເຜີຍ.
8ກ ອທ 3:12–13. ຄມພ ສັດທາ.
ຂ ມທ 9:22.
9ກ 1 ນຟ 8:12; ແອວ 36:24.
ຂ 2 ນຟ 33:3; ຄມ 1:8; ແອວ 34:26–27.
10ກ ຄມພ ຈິດໃຈ; ດົນໃຈ, ການດົນໃຈ.

ເຈົ້າ ອີກ, ໂດຍ ກ່າວ ວ່າ: ເຮົາ ຈະ ມາ ຢ້ຽມ
ຢາມພີ່ນ້ອງຂອງເຈົ້າຕາມຄວາມພາກພຽນ
ຂອງພວກເຂົາໃນການຮັກສາບັນຍັດຂອງ
ເຮົາ. ເຮົາ [ຂ]ມອບ ແຜ່ນ ດິນນີ້ໃຫ້ແກ່ພວກ
ເຂົາ, ແລະ ມັນເປັນແຜ່ນດິນສັກສິດ, ແລະ
ເຮົາບໍ່ໄດ້ [ຄ]ສາບ ແຊ່ງມັນນອກຈາກເພາະ
ຄວາມຊົ່ວຮ້າຍ; ດັ່ງນັ້ນ, ເຮົາຈະມາຢ້ຽມ
ຢາມພີ່ນ້ອງຂອງເຈົ້າຕາມທີ່ເຮົາໄດ້ກ່າວ
ໄວ້; ແລະ ເຮົາຈະນຳການລ່ວງລະເມີດ
ຂອງພວກເຂົາພ້ອມກັບຄວາມເສົ້າສະ
ຫລົດໃຈມາລົງໃສ່ຫົວຂອງພວກເຂົາເອງ.
11 ແລະ ຫລັງຈາກຂ້າພະເຈົ້າເອໂນດ
ໄດ້ຍິນຄຳເຫລົ່ານີ້ແລ້ວ, ສັດທາຂອງຂ້າ
ພະເຈົ້າບໍ່ຫວັ່ນໄຫວໃນພຣະຜູ້ເປັນເຈົ້າ;
ແລະ ຂ້າພະເຈົ້າໄດ້ອະທິຖານຕໍ່ພຣະອົງ
ເພື່ອຊາວເລມັນ, ພີ່ນ້ອງຂອງຂ້າພະເຈົ້າ,
ດ້ວຍຄວາມດີ້ນຮົນຢູ່ດົນນານຫລາຍເທື່ອ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກຂ້າພະເຈົ້າໄດ້ [ກ]ອະທິຖານຈົບ
ສຸດຄວາມພາກພຽນແລ້ວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວກັບຂ້າພະເຈົ້າວ່າ: ເຮົາຈະໃຫ້ເຈົ້າ
ຕາມ [ຂ]ຄວາມປາດຖະໜາຂອງເຈົ້າເພາະ
ສັດທາຂອງເຈົ້າ.
13 ແລະ ບັດນີ້ຈົ່ງເບິ່ງ, ນີ້ຄືຄວາມປາດ
ຖະໜາທີ່ຂ້າພະເຈົ້າປາດຖະໜາຈາກພຣະ
ອົງ—ຄືຖ້າຫາກເປັນໄປວ່າ ຊາວນີໄຟຜູ້
ຄົນຂອງຂ້າພະເຈົ້າຈະຕົກໄປສູ່ການລ່ວງ
ລະເມີດ, ແລະ [ກ]ຖືກທຳລາຍດ້ວຍວິທີໃດກໍ
ຕາມ ແລະ ຊາວເລມັນບໍ່ຖືກທຳລາຍແລ້ວ,
ຂໍໃຫ້ອົງພຣະຜູ້ເປັນເຈົ້າຈົ່ງ [ຂ]ຮັກສາບັນທຶກ
ຂອງຊາວນີໄຟ, ຜູ້ຄົນຂອງຂ້າພະເຈົ້າ; ເຖິງ
ແມ່ນຖ້າຫາກເປັນໄປໂດຍອຳນາດຂອງ
ພຣະຫັດອັນສັກສິດຂອງພຣະອົງ, ເພື່ອຈະ
ໄດ້ນຳບັນທຶກ [ຄ]ອອກມາໃຫ້ຊາວເລມັນໃນ
ເວລາໃດເວລາໜຶ່ງໃນອະນາຄົດ, ເພື່ອມັນ
ອາດຈະ [ງ]ນຳພວກເຂົາມາສູ່ຄວາມລອດ—
14 ເພາະປະຈຸບັນນີ້ ການດີ້ນຮົນຂອງ
ພວກເຮົາ [ກ]ບໍ່ມີປະໂຫຍດໃນການນຳພາ
ເຂົາກັບຄືນມາຫາສັດທາອັນແທ້ຈິງ. ແລະ
ພວກເຂົາສາບານໄວ້ໃນຄວາມຄຽດແຄ້ນ
ຂອງພວກເຂົາວ່າ, ຖ້າຫາກເປັນໄປໄດ້,
ພວກເຂົາຈະ [ຂ]ທຳລາຍບັນທຶກຂອງພວກ
ເຮົາກັບພວກເຮົາ, ແລະ ທັງຮີດຄອງປະເພ
ນີທັງໝົດຂອງບັນພະບຸລຸດຂອງພວກເຮົາ
ນຳອີກ.
15 ດັ່ງນັ້ນ, ຂ້າພະເຈົ້າໂດຍຮູ້ວ່າອົງພຣະ
ຜູ້ເປັນເຈົ້າສາມາດ [ກ]ຮັກສາບັນທຶກຂອງ
ພວກເຮົາໄວ້ໄດ້, ຂ້າພະເຈົ້າຈຶ່ງຮ້ອງທູນ
ພຣະອົງຢູ່ຕະຫລອດເວລາ, ເພາະພຣະອົງ
ໄດ້ກ່າວກັບຂ້າພະເຈົ້າວ່າ: ສິ່ງໃດກໍຕາມທີ່
ເຈົ້າຈະຂໍດ້ວຍສັດທາ, ໂດຍເຊື່ອວ່າເຈົ້າຈະ
ໄດ້ຮັບໃນພຣະນາມຂອງພຣະຄຣິດ, ແລ້ວ
ເຈົ້າຈະໄດ້ຮັບ.
16 ແລະ ຂ້າພະເຈົ້າມີສັດທາ, ແລະ ຂ້າ
ພະເຈົ້າໄດ້ຮ້ອງທູນຕໍ່ພຣະເຈົ້າເພື່ອພຣະ
ອົງຈະ [ກ]ຮັກສາ [ຂ]ບັນທຶກໄວ້; ແລະ ພຣະ
ອົງໄດ້ໃຫ້ພັນທະສັນຍາກັບຂ້າພະເຈົ້າ
ວ່າ ພຣະອົງຈະ [ຄ]ນຳມັນອອກມາໃຫ້ຊາວ
ເລມັນໃນເວລາອັນເໝາະສົມຂອງພຣະ
ອົງ.

10 ຂ 1 ນຟ 2:20.
ຄ ອທ 2:7–12.
12 ກ ມມ 5:21; 9:36.
ຂ ພສສ 37:4;
1 ນຟ 7:12;
ຣລມ 10:5.
13 ກ ມມ 6:1, 6.
ຂ ຄມ 1:6–11;
ແອວ 37:2.
ຄ ແອວ 37:19;
ອທ 12:22;
ຄພ 3:18.
ງ ແອວ 9:17.
14 ກ ຢຄ 7:24.
ຂ ມມ 6:6.
15 ກ ຄມພ ພຣະຄຳພີ—ພຣະ
ຄຳພີທີ່ຕ້ອງຮັກສາໄວ້.
16 ກ 3 ນຟ 5:13–15;
ຄພ 3:19–20; 10:46–50.
ຂ ຄມພ ພຣະຄຳພີມໍມອນ.
ຄ 2 ນຟ 27:6.

17 ແລະ ຂ້າພະເຈົ້າເອໂນດຮູ້ວ່າມັນຈະ
ເປັນໄປຕາມພັນທະສັນຍາຊຶ່ງພຣະອົງໄດ້
ໃຫ້ໄວ້; ດັ່ງນັ້ນ ຈິດວິນຍານຂອງຂ້າພະເຈົ້າ
ຈຶ່ງເຊົາເປັນຫ່ວງ.
18 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ຂ້າພະເຈົ້າວ່າ: ບັນພະບຸລຸດຂອງເຈົ້າໄດ້
ຂໍຮ້ອງເລື່ອງນີ້ຈາກເຮົາແລ້ວ; ແລະ ມັນ
ຈະເປັນໄປໃຫ້ພວກເຂົາຕາມສັດທາຂອງ
ພວກເຂົາ; ເພາະສັດທາຂອງພວກເຂົາ
ເໝືອນກັບຂອງເຈົ້າ.
19 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຂ້າພະເຈົ້າເອໂນດໄດ້ອອກໄປທົ່ວໃນ
ບັນດາຜູ້ຄົນຂອງນີໄຟ, ທຳນາຍເຖິງເລື່ອງ
ທີ່ຈະມາເຖິງ, ແລະ ໃຫ້ຖ້ອຍຄຳເຖິງເລື່ອງ
ທີ່ຂ້າພະເຈົ້າໄດ້ຍິນ ແລະ ໄດ້ເຫັນມາ.
20 ແລະ ຂ້າພະເຈົ້າເປັນພະຍານວ່າ ຜູ້
ຄົນຂອງນີໄຟໄດ້ພະຍາຍາມຢ່າງພາກ
ພຽນທີ່ຈະນຳເອົາຊາວເລມັນ ກັບຄືນມາສູ່
ສັດທາອັນແທ້ຈິງໃນພຣະເຈົ້າ. ແຕ່ [ກ]ວຽກ
ງານຂອງພວກເຮົາບໍ່ມີປະໂຫຍດ; ເພາະ
ຄວາມກຽດຊັງຂອງພວກເຂົາຍັງຝັງແໜ້ນ,
ແລະ ພວກເຂົາຖືກນຳໄປໂດຍສັນດານ
ຊົ່ວຂອງພວກເຂົາ, ຈົນກັບປ່າເຖື່ອນ ແລະ
ຮ້າຍກາດ, ແລະ ເປັນຄົນ [ຂ]ກະຫາຍເລືອດ,
ຊຶ່ງເຕັມໄປດ້ວຍການນັບຖື [ຄ]ຮູບບູຊາ ແລະ
ຄວາມສົກກະປົກ; ກິນສັດທີ່ກິນສັດອື່ນໆ;
ອາໄສຢູ່ໃນຜ້າເຕັ້ນ, ແລະ ຊັດເຊພະເນ
ຈອນໄປໃນຖິ່ນແຫ້ງແລ້ງກັນດານ ນຸ່ງແຕ່
ແຜ່ນໜັງສັ້ນໆຄຽນແອວ ແລະ ແຖຫົວ
ໂລ້ນ; ຄວາມຊຳນານຂອງພວກເຂົາຢູ່ກັບ
ການໃຊ້ [ງ]ທະນູ, ແລະ ດາບສອງຄົມ, ແລະ
ຂວານ. ແລະ ພວກເຂົາສ່ວນຫລາຍບໍ່ກິນ
ຫຍັງນອກຈາກຊີ້ນດິບ; ແລະ ພວກເຂົາພະ
ຍາຍາມທຳລາຍພວກເຮົາຢູ່ຕະຫລອດ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນຂອງນີໄຟໄດ້ໄຖດິນ, ແລະ [ກ]ປູກພືດ
ແລະ ຕົ້ນໝາກໄມ້ຫລາຍຊະນິດ, ແລະ ລ້ຽງ
ຝູງສັດຫລາຍຊະນິດ, ທັງແບ້ບ້ານ ແລະ ແບ້
ປ່າ, ທັງມ້າເປັນຈຳນວນຫລວງຫລາຍອີກ.
22 ແລະ ມີ [ກ]ສາດສະດາເປັນຈຳນວນ
ຫລວງຫລາຍໃນບັນດາພວກເຮົາ. ແລະ ຜູ້
ຄົນເປັນຄົນ [ຂ]ແຂງຄໍ, ແລະ ຍາກທີ່ຈະເຂົ້າ
ໃຈ.
23 ແລະ ບໍ່ ມີ ຫຍັງ ເລີຍ ນອກ ຈາກ
[ກ]ຄວາມຮຸນແຮງທີ່ສຸດ, [ຂ]ການສັ່ງສອນ
ແລະ ການທຳນາຍເຖິງສົງຄາມ, ແລະ
ການຂັດແຍ້ງ, ແລະ ການທຳລາຍ, ແລະ
[ຄ]ການເຕືອນພວກເຂົາຢູ່ຕະຫລອດເວລາ
ເຖິງຄວາມຕາຍ, ແລະ ໄລຍະເວລາຂອງ
ຊົ່ວນິລັນດອນ, ແລະ ການພິພາກສາ, ແລະ
ອຳນາດຂອງພຣະເຈົ້າ, ແລະ ເລື່ອງທັງໝົດ
ນີ້—ໂດຍກະຕຸ້ນພວກເຂົາຢູ່ [ງ]ຕະຫລອດ
ວັນເວລາໃຫ້ພວກເຂົາຢູ່ໃນຄວາມຢ້ານ
ກົວພຣະຜູ້ເປັນເຈົ້າ. ຂ້າພະເຈົ້າກ່າວວ່າ
ບໍ່ມີຫຍັງເລີຍນອກຈາກສິ່ງເຫລົ່ານີ້, ແລະ
ຄວາມແຈ່ມແຈ້ງທີ່ສຸດຂອງຄຳເວົ້າທີ່ຈະ
ກັນບໍ່ໃຫ້ພວກເຂົາລົງໄປຫາຄວາມພິນາດ
ຢ່າງໄວ. ແລະ ຕາມນີ້ ຂ້າພະເຈົ້າຈຶ່ງບັນ
ທຶກກ່ຽວກັບພວກເຂົາ.
24 ແລະ ຂ້າພະເຈົ້າເຫັນສົງຄາມລະ
ຫວ່າງຊາວນີໄຟກັບຊາວເລມັນໃນວັນ
ເວລາຂອງຂ້າພະເຈົ້າ.

20 *ກ* ມຣມ 9:6.
*ຂ* ຈຣ 1:6.
*ຄ* ມຊຢ 9:12.
ຄມພ ການນັບຖືຮູບບູຊາ.
*ງ* ມຊຢ 10:8.
21 *ກ* ມຊຢ 9:9.
22 *ກ* ຄມ 1:16–18.
*ຂ* ຈຣ 1:3.
23 *ກ* 1 ນຟ 16:2;
2 ນຟ 33:5.
*ຂ* ຄມພ ສັ່ງສອນ.
*ຄ* ຣລມ 12:3.
*ງ* ຈຣ 1:12;
ແອວ 31:5.

25 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຖົ້າແກ່ລົງ, ແລະ ເວລາໜຶ່ງ
ຮ້ອຍເຈັດສິບເກົ້າປີໄດ້ຜ່ານໄປນັບຕັ້ງແຕ່
ເວລາທີ່ພໍ່ລີໄຮຂອງພວກເຮົາໄດ້ [ກ]ອອກ
ຈາກເຢຣູຊາເລັມມາ.
26 ແລະ ຂ້າພະເຈົ້າຮູ້ວ່າໃນບໍ່ຊ້ານີ້ ຂ້າ
ພະເຈົ້າຕ້ອງລົງໄປຫາຫລຸມສົບຂອງຂ້າພະ
ເຈົ້າ, ໂດຍທີ່ຖືກກະທຳໂດຍອຳນາດຂອງ
ພຣະເຈົ້າຊຶ່ງໃຫ້ຂ້າພະເຈົ້າສັ່ງສອນ ແລະ
ທຳນາຍຕໍ່ຜູ້ຄົນພວກນີ້, ແລະ ປະກາດພຣະ
ຄຳ ຕາມຄວາມຈິງທີ່ມີຢູ່ໃນພຣະຄຣິດ.
ແລະ ຂ້າພະເຈົ້າໄດ້ປະກາດມາຕະຫລອດ
ວັນເວລາຂອງຂ້າພະເຈົ້າ, ແລະ ປິຕິຍິນດີ
ໃນສິ່ງເຫລົ່ານີ້ເໜືອກວ່າສິ່ງໃດໆໃນໂລກ.
27 ແລະ ໃນບໍ່ຊ້າຂ້າພະເຈົ້າຈະໄປຫາ
[ກ]ບ່ອນພັກຜ່ອນຂອງຂ້າພະເຈົ້າ ຊຶ່ງຢູ່ກັບ
ພຣະຜູ້ໄຖ່ຂອງຂ້າພະເຈົ້າ; ເພາະຂ້າພະ
ເຈົ້າຮູ້ວ່າ ໃນພຣະອົງຂ້າພະເຈົ້າຈະໄດ້ພັກ
ຜ່ອນ. ແລະ ຂ້າພະເຈົ້າປິຕິຍິນດີໃນວັນ
ເມື່ອ [ຂ]ຄວາມເປັນມະຕະຂອງຂ້າພະເຈົ້າ
ຈະສວມໃສ່ [ຄ]ຄວາມເປັນອະມະຕະ, ແລະ
ຈະຢືນຢູ່ຕໍ່ພຣະພັກຂອງພຣະອົງ; ເພາະ
ໃນເວລານັ້ນ ຂ້າພະເຈົ້າຈະເຫັນພຣະພັກ
ຂອງພຣະອົງດ້ວຍຄວາມສຸກໃຈ, ແລະ
ພຣະອົງຈະກ່າວກັບຂ້າພະເຈົ້າວ່າ: ມາຫາ
ເຮົາເຖີດ, ເຈົ້າຜູ້ເປັນສຸກ, ເຮົາມີບ່ອນຕຽມ
ໄວ້ໃຫ້ເຈົ້າແລ້ວຢູ່ໃນ [ງ]ຜາສາດຂອງພຣະ
ບິດາຂອງເຮົາ. ອາແມນ.

# ໜັງສືເຈຣອມ

*ຊາວນີໄຟຮັກສາກົດຂອງໂມເຊ, ລໍຖ້າການສະເດັດມາຂອງພຣະຄຣິດ, ແລະ ມີຄວາມຮຸ່ງເຮືອງຢູ່ໃນແຜ່ນດິນ—ສາດສະດາຫລາຍທ່ານອອກແຮງງານເພື່ອໃຫ້ຜູ້ຄົນຢູ່ໃນເສັ້ນທາງແຫ່ງຄວາມຈິງ. ປະມານ 399–361 ປີ ກ່ອນ ຄ.ສ.*

1 ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າເຈຣອມໄດ້
ບັນທຶກຂໍ້ຄວາມໄວ້ເລັກໜ້ອຍຕາມຄຳສັ່ງ
ຂອງເອໂນດ, ບິດາຂອງຂ້າພະເຈົ້າ, ເພື່ອ
ຈະໄດ້ຮັກສາ [ກ]ລຳດັບການສືບເຊື້ອສາຍ
ຂອງພວກເຮົາໄວ້.
2 ແລະ ເນື່ອງ ຈາກ ວ່າ [ກ]ແຜ່ນ ຈາລຶກ
ເຫລົ່ານີ້ [ຂ]ນ້ອຍຫລາຍ, ແລະ ເນື່ອງຈາກ
ສິ່ງເຫລົ່ານີ້ໄດ້ຖືກ [ຄ]ບັນທຶກໄວ້ດ້ວຍເຈດ
ຕະນາເພື່ອຈະໃຫ້ເປັນປະໂຫຍດແກ່ [ງ]ຊາວ
ເລມັນ, ພີ່ນ້ອງຂອງພວກເຮົາ, ດັ່ງນັ້ນ, ມັນ
ຈຶ່ງຈຳເປັນທີ່ຂ້າພະເຈົ້າຕ້ອງບັນທຶກໄວ້
ເລັກໜ້ອຍ; ແຕ່ຂ້າພະເຈົ້າຈະບໍ່ຂຽນເລື່ອງ
ການທຳນາຍ ຫລື ການເປີດເຜີຍຂອງຂ້າ
ພະເຈົ້າ. ເພາະຂ້າພະເຈົ້າບໍ່ສາມາດບັນ
ທຶກໄວ້ຫລາຍກວ່າທີ່ບັນພະບຸລຸດຂອງຂ້າ
ພະເຈົ້າໄດ້ບັນທຶກໄວ້ແລ້ວແມ່ນບໍ? ຫລື ວ່າ
ພວກເພິ່ນບໍ່ໄດ້ເປີດເຜີຍແຜນແຫ່ງຄວາມ

---

25 *ກ* 1 ນຟ 2:2–4.
27 *ກ* ຄມພ ພັກຜ່ອນ.
*ຂ* ຄມພ ມະຕະ, ຄວາມເປັນມະຕະ.
*ຄ* ຄມພ ອະມະຕະ, ຄວາມເປັນອະມະຕະ.
*ງ* ຢຣ 14:2–3; ອທ 12:32–34; ຄພ 72:4; 98:18.

[ເຈຣອມ]
**1** 1 *ກ* 1 ນຟ 3:12; 5:14.
2 *ກ* ຢຄ 3:14; ອມນ 1:1.
*ຂ* 1 ນຟ 6.
*ຄ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
*ງ* 2 ນຟ 27:6; ມມ 5:12.

ລອດໄວ້ບໍ? ຂ້າພະເຈົ້າຂໍກ່າວກັບພວກ
ທ່ານວ່າຖືກແລ້ວ; ແລະນີ້ເປັນສິ່ງພຽງພໍ
ແລ້ວສຳລັບຂ້າພະເຈົ້າ.
3 ຈົ່ງເບິ່ງ, ມັນສົມຄວນທີ່ຈະເຮັດວຽກ
ງານໃຫ້ຫລາຍໃນບັນດາຜູ້ຄົນພວກນີ້ເພາະ
ຄວາມແຂງກະດ້າງຂອງໃຈຂອງພວກເຂົາ,
ແລະ ຄວາມໜວກຂອງຫູພວກເຂົາ, ແລະ
ຄວາມມືດມົນຂອງຈິດໃຈພວກເຂົາ; ແລະ
ຄວາມ [ກ]ແຂງຄໍຂອງພວກເຂົາ; ເຖິງຢ່າງ
ໃດກໍຕາມ, ພຣະເຈົ້າຍັງເມດຕາຕໍ່ພວກ
ເຂົາຢ່າງຍິ່ງ, ແລະ ເຖິງບັດນີ້ພຣະອົງຍັງບໍ່
[ຂ]ກວາດພວກເຂົາອອກຈາກແຜ່ນດິນເລີຍ.
4 ແລະ ມີຄົນເປັນຈຳນວນຫລວງຫລາຍ
ໃນບັນດາພວກເຮົາທີ່ໄດ້ຮັບ [ກ]ການເປີດ
ເຜີຍມາຫລາຍເທື່ອແລ້ວ, ເພາະບໍ່ແມ່ນ
ທຸກຄົນທີ່ເປັນຄົນແຂງຄໍ. ແລະ ຫລາຍຕໍ່
ຫລາຍຄົນທີ່ບໍ່ແຂງຄໍ ແລະ ມີສັດທາ, ຍ່ອມ
ມີ [ຂ]ການພົວພັນກັບພຣະວິນຍານສັກສິດ,
ຊຶ່ງສະແດງໃຫ້ປະຈັກແກ່ລູກຫລານມະນຸດ
ຕາມສັດທາຂອງພວກເຂົາ.
5 ແລະ ບັດນີ້, ຈົ່ງເບິ່ງເວລາສອງຮ້ອຍປີ
ໄດ້ຜ່ານໄປ ແລະ ຜູ້ຄົນຂອງນີໄຟໄດ້ເຂັ້ມ
ແຂງຫລາຍຂຶ້ນໃນແຜ່ນດິນ. ພວກເຂົາຍຶດ
ຖືທີ່ຈະ [ກ]ຮັກສາກົດຂອງໂມເຊ ແລະ ຖືວັນ
[ຂ]ຊະບາໂຕເປັນວັນສັກສິດແດ່ພຣະຜູ້ເປັນ
ເຈົ້າ. ແລະ ພວກເຂົາບໍ່ [ຄ]ດູຖູກ; ທັງບໍ່ [ງ]ໝິ່ນ
ປະໝາດ. ແລະ ກົດໝາຍຂອງແຜ່ນດິນກໍ
ເຂັ້ມງວດເຕັມທີ່.
6 ແລະ ພວກເຂົາກະຈັດກະຈາຍໄປຢູ່
ທົ່ວແຜ່ນດິນຢ່າງຫລວງຫລາຍ, ແລະ ຊາວ
ເລມັນກໍເໝືອນກັນ. ແລະ ພວກເຂົາມີຜູ້ຄົນ
ຫລາຍກວ່າຊາວນີໄຟ; ແລະ ພວກເຂົາຮັກ
[ກ]ການຄາດຕະກຳ ແລະ ກິນເລືອດສັດ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາມາສູ້ຮົບກັບພວກເຮົາຊາວນີໄຟຫລາຍ
ເທື່ອ. ແຕ່ [ກ]ກະສັດກັບພວກຜູ້ນຳຂອງພວກ
ເຮົາເປັນຜູ້ທີ່ມີພະລັງໃນສັດທາຕໍ່ພຣະຜູ້
ເປັນເຈົ້າ; ແລະ ພວກເພິ່ນໄດ້ສິດສອນຜູ້
ຄົນເລື່ອງທາງຂອງພຣະຜູ້ເປັນເຈົ້າ; ດັ່ງ
ນັ້ນ, ພວກເຮົາຈຶ່ງຕ້ານຊາວເລມັນໄດ້ ແລະ
ກວາດພວກເຂົາອອກຈາກແຜ່ນດິນ [ຂ]ຂອງ
ພວກເຮົາໄປ, ແລະ ເລີ່ມຕົ້ນເສີມສ້າງກຳ
ລັງໃນເມືອງຂອງພວກເຮົາ, ຫລື ບ່ອນ
ອື່ນໆທີ່ເປັນມູນມໍລະດົກຂອງພວກເຮົາ.
8 ແລະ ພວກເຮົາມີຄົນເພີ່ມທະວີຂຶ້ນຢ່າງ
ຫລວງຫລາຍ, ແລະ ໄດ້ແຜ່ຂະຫຍາຍອອກ
ໄປທົ່ວພື້ນແຜ່ນດິນ, ແລະ ກັບມາຮັ່ງມີຢ່າງ
ຍິ່ງດ້ວຍຄຳ, ແລະ ເງິນ, ແລະ ດ້ວຍສິ່ງທີ່ມີ
ຄ່າ, ແລະ ໂດຍສະຫລຸບ ຝີມືດີໃນງານໄມ້
ດ້ວຍອາຄານ, ແລະ ດ້ວຍເຄື່ອງຈັກນຳອີກ,
ແລະ ດ້ວຍເຫລັກ ແລະ ທອງແດງ, ແລະ
ທອງເຫລືອງ ແລະ ເຫລັກກ້າ, ແລະ ເຮັດ
ເຄື່ອງມືນາໆຊະນິດໄວ້ໄຖດິນ, ແລະ ເຮັດ
[ກ]ອາວຸດແຫ່ງສົງຄາມ—ແທ້ຈິງແລ້ວ, ລູກ
ທະນູອັນແຫລມຄົມ, ແລະ ບັ້ງລູກທະນູ,
ຫອກ ແລະ ຫລາວ, ແລະ ການຕຽມທຸກ
ຢ່າງເພື່ອສົງຄາມ.
9 ແລະ ໂດຍການຕຽມພ້ອມຕໍ່ສູ້ກັບຊາວ
ເລມັນຢູ່ນັ້ນ, ເຂົາຈຶ່ງບໍ່ໄດ້ຫຍັງຈາກພວກ
ເຮົາເລີຍ. ແຕ່ພຣະຄຳຂອງພຣະຜູ້ເປັນເຈົ້າ

3 ກ ອນ 1:22–23.
ຂ ອທ 2:8–10.
4 ກ ແອວ 26:22; ຣລມ 11:23; ຄພ 107:18–19. ຄມພ ເປີດເຜີຍ, ການເປີດເຜີຍ.
ຂ ຄມພ ພຣະວິນຍານບໍລິສຸດ.
5 ກ 2 ນຟ 25:24; ແອວ 34:13–14.
ຂ ອພຍ 35:2. ຄມພ ວັນຊະບາໂຕ.
ຄ ຄມພ ຄຳຫຍາບຄາຍ.
ງ ຄມພ ໝິ່ນປະໝາດ, ການໝິ່ນປະໝາດ.
6 ກ ຍຄ 7:24; ອນ 1:20.
7 ກ ຍຄ 1:9, 11, 15.
ຂ ຄມ 1:14.
8 ກ ມຊຢ 10:8.

ເປັນຈິງແລ້ວ, ຊຶ່ງພຣະອົງໄດ້ຮັບສັ່ງໄວ້ກັບ
ບັນພະບຸລຸດຂອງພວກເຮົາ, ມີຄວາມວ່າ:
ຕາບໃດທີ່ເຈົ້າຈະຮັກສາບັນຍັດຂອງເຮົາ
ເຈົ້າຈະຮຸ່ງເຮືອງຢູ່ໃນແຜ່ນດິນ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ສາດ
ສະດາຂອງພຣະຜູ້ເປັນເຈົ້າໄດ້ເວົ້າຂູ່ຜູ້ຄົນ
ຂອງນີໄຟຕາມພຣະຄຳຂອງພຣະເຈົ້າ, ວ່າ
ຖ້າຫາກພວກເຂົາບໍ່ຮັກສາພຣະບັນຍັດ,
ແຕ່ຕົກໄປສູ່ການລ່ວງລະເມີດແລ້ວ, ພວກ
ເຂົາຈະຖືກ [ກ]ທຳລາຍໄປຈາກພື້ນແຜ່ນດິນ
ນີ້.
11 ດັ່ງນັ້ນ, ສາດສະດາ, ແລະ ປະໂລຫິດ,
ແລະ ຜູ້ສອນໄດ້ເຮັດວຽກງານ ຢ່າງພາກ
ພຽນ, ແນະນຳຜູ້ຄົນດ້ວຍສຸດຄວາມອົດກັ້ນ
ໃຫ້ພາກພຽນ; ສິດສອນ [ກ]ກົດຂອງໂມເຊ,
ແລະ ຈຸດປະສົງທີ່ໃຫ້ກົດໄວ້ນັ້ນກໍເພື່ອຈະ
ໄດ້ຊັກຊວນໃຫ້ພວກເຂົາ [ຂ]ມຸ້ງຫາພຣະເມຊີ
ອາ, ແລະ ເຊື່ອໃນພຣະອົງທີ່ຈະສະເດັດມາ
[ຄ]ຄືກັນກັບພຣະອົງເປັນມາແລ້ວ. ແລະ ຕາມ
ວິທີນີ້ ພວກເພິ່ນໄດ້ສິດສອນພວກເຂົາ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແລະ ໂດຍການກະທຳເຊັ່ນນັ້ນ ພວກເພິ່ນ
ຈຶ່ງເຮັດໃຫ້ພວກເຂົາລອດຈາກການຖືກ
[ກ]ທຳລາຍໃນພື້ນແຜ່ນດິນ; ເພາະວ່າພວກ
ເພິ່ນໄດ້ [ຂ]ສຽບແທງໃຈຂອງພວກເຂົາດ້ວຍ
ພຣະຄຳ ຢູ່ຕະຫລອດເວລາເພື່ອໃຫ້ມາສູ່
ການກັບໃຈ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາສອງຮ້ອຍສາມສິບແປດປີຜ່ານໄປ—
ໂດຍມີສົງຄາມ ແລະ ການຂັດແຍ້ງ ແລະ
ການແຕກແຍກເປັນສ່ວນຫລາຍຂອງໄລ
ຍະເວລານັ້ນ.
14 ແລະ ຂ້າພະເຈົ້າ ເຈຣອມ ຈະບໍ່ບັນ
ທຶກຕື່ມອີກ, ເພາະແຜ່ນຈາລຶກເຫລົ່ານີ້
ນ້ອຍຫລາຍ. ແຕ່ຈົ່ງເບິ່ງ, ພີ່ນ້ອງຂອງຂ້າ
ພະເຈົ້າ, ພວກທ່ານສາມາດໄປເບິ່ງ [ກ]ແຜ່ນ
ຈາລຶກອື່ນໆຂອງນີໄຟໄດ້; ເພາະຈົ່ງເບິ່ງ,
ບັນທຶກກ່ຽວກັບສົງຄາມຂອງພວກເຮົາໄດ້
ບັນທຶກໄວ້ຢູ່ໃນນັ້ນຕາມການບັນທຶກຂອງ
ກະສັດ, ຫລື ວ່າເລື່ອງທີ່ເພິ່ນບອກນັ້ນໄດ້ມີ
ບັນທຶກໄວ້.
15 ແລະ ຂ້າພະເຈົ້າຈະມອບແຜ່ນຈາລຶກ
ເຫລົ່ານີ້ໄວ້ໃນມືຂອງອອມໄນລູກຊາຍຂອງ
ຂ້າພະເຈົ້າ ເພື່ອລາວຈະໄດ້ຮັກສາມັນໄວ້
ຕາມ [ກ]ຄຳສັ່ງຂອງບັນພະບຸລຸດຂອງຂ້າພະ
ເຈົ້າ.

# ໜັງສືອອມໄນ

*ອອມໄນ, ອາມາຣອນ, ເຄມິດ, ອະບິນາໂດມ, ແລະ ອາມາລະໄຄ, ແຕ່ລະຄົນປ່ຽນຜຽນກັນຮັກສາແຜ່ນຈາລຶກ—ໂມໄຊຢາຄົ້ນພົບຜູ້ຄົນຂອງເຊຣາເຮັມລາ, ຜູ້ຊຶ່ງໄດ້ອອກມາຈາກເຢຣູຊາເລັມໃນເວລາທີ່ເຊເດກີຢາເປັນກະສັດ—ໂມໄຊຢາຖືກແຕ່ງຕັ້ງໃຫ້ເປັນກະສັດຂອງພວກເຂົາ—ລູກຫລານຂອງມິວເລັກທີ່ເຊຣາເຮັມລາໄດ້ພົບເຫັນໂຄຣິອານທະເມີຄົນສຸດທ້າຍຂອງຊາວຢາເຣັດ—ກະສັດເບັນຢາມິນໄດ້ສືບບັນລັງ*

10 ກ 1 ນຟ 12:19–20; ອມນ 1:5.
11 ກ ຢຄ 4:5; ແອວ 25:15–16.
ຂ 2 ນຟ 11:4; ອທ 12:18–19.
ຄ 2 ນຟ 25:24–27; ມຊຢ 3:13; 16:6.
12 ກ ອທ 2:10.
ຂ ແອວ 31:5.
14 ກ 1 ນຟ 9:2–4.
15 ກ ຢຄ 1:1–4.

*ແທນ ໂນ ໄຊ ຢາ—ມະນຸດ ຄວນ ຖວາຍ ຈິດ ວິນຍານ ຂອງຕົນເປັນເຄື່ອງບູຊາແດ່ພຣະ ຄຣິດ. ປະມານ 323–130 ປີ ກ່ອນ ຄ.ສ.*

1 ຈົ່ງ ເບິ່ງ, ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຂ້າ ພະ ເຈົ້າ ອອມ ໄນ ໂດຍ ໄດ້ ຮັບ ຄຳ ສັ່ງ
ຈາກເຈຣອມບິດາຂອງຂ້າພະເຈົ້າ ໃຫ້ບັນ
ທຶກໄວ້ເລັກໜ້ອຍໃນແຜ່ນຈາລຶກເຫລົ່ານີ້,
ເພື່ອຮັກສາລຳດັບການສືບເຊື້ອສາຍຂອງ
ພວກເຮົາ—
2 ດັ່ງນັ້ນ, ໃນວັນເວລາຂອງຂ້າພະເຈົ້າ,
ຂ້າພະເຈົ້າຢາກໃຫ້ພວກທ່ານຮູ້ຈັກວ່າ ຂ້າ
ພະເຈົ້າໄດ້ຕໍ່ສູ້ມາຫລາຍດ້ວຍດາບເພື່ອປົກ
ປ້ອງຊາວນີໄຟຜູ້ຄົນຂອງຂ້າພະເຈົ້າ, ເພື່ອ
ບໍ່ໃຫ້ຕົກຢູ່ໃນກຳມືຂອງຊາວເລມັນສັດຕູ
ຂອງພວກເຂົາ. ແຕ່ຈົ່ງເບິ່ງ, ຕົວຂອງຂ້າພະ
ເຈົ້າເປັນຄົນຊົ່ວ, ແລະ ຂ້າພະເຈົ້າບໍ່ໄດ້ຮັກ
ສາຂໍ້ກຳນົດ ແລະ ພຣະບັນຍັດຂອງພຣະຜູ້
ເປັນເຈົ້າຕາມທີ່ຂ້າພະເຈົ້າຄວນຮັກສາ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ສອງ ຮ້ອຍ ເຈັດສິບ ຫົກ ປີ ຜ່ານ ໄປ ແລະ
ພວກເຮົາມີຊ່ວງເວລາແຫ່ງສັນຕິສຸກຫລາຍ
ເທື່ອ; ແລະ ມີຊ່ວງເວລາແຫ່ງສົງຄາມ ແລະ
ການນອງເລືອດຫລາຍເທື່ອ. ແທ້ຈິງແລ້ວ,
ແລະ ໂດຍສະຫລຸບ, ເວລາສອງຮ້ອຍແປດ
ສິບສອງປີຜ່ານໄປ, ແລະ ຂ້າພະເຈົ້າຍັງໄດ້
ຮັກສາແຜ່ນຈາລຶກເຫລົ່ານີ້ໄວ້ຕາມ [ກ]ຄຳສັ່ງ
ຂອງບັນພະບຸລຸດຂອງຂ້າພະເຈົ້າ; ແລະ
ຂ້າພະເຈົ້າໄດ້ມອບມັນຕໍ່ໃຫ້ອາມາຣອນ
ລູກຊາຍຂອງຂ້າພະເຈົ້າ. ແລະ ຂ້າພະເຈົ້າ
ຂໍຈົບພຽງເທົ່ານີ້.
4 ແລະ ບັດນີ້ຂ້າພະເຈົ້າອາມາຣອນບັນ
ທຶກເລື່ອງຫຍັງກໍຕາມທີ່ຂ້າພະເຈົ້າຈະບັນ
ທຶກ ໄວ້ ໜ້ອຍ ໜຶ່ງ ໄວ້ ໃນ ໜັງສື ຂອງ ບິດາ
ຂອງຂ້າພະເຈົ້າ.
5 ຈົ່ງ ເບິ່ງ, ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາສາມຮ້ອຍຊາວປີຜ່ານໄປ, ແລະ ຊາວ
ນີໄຟ ພວກ ທີ່ ຊົ່ວ ຫລາຍ ກວ່າ ໄດ້ ຖືກ [ກ]ທຳ
ລາຍໄປ.
6 ເພາະພຣະຜູ້ເປັນເຈົ້າຈະບໍ່ຍອມ, ຫລັງ
ຈາກທີ່ພຣະອົງໄດ້ນຳພວກເຂົາອອກຈາກ
ແຜ່ນດິນເຢຣູຊາເລັມ ແລະ ໄດ້ປົກປັກຮັກ
ສາພວກເຂົາບໍ່ໃຫ້ຕົກຢູ່ໃນກຳມືຂອງສັດຕູ,
ແທ້ຈິງແລ້ວ, ພຣະອົງຈະບໍ່ຍອມໃຫ້ພຣະ
ຄຳຊຶ່ງພຣະອົງໄດ້ກ່າວກັບບັນພະບຸລຸດ
ຂອງພວກເຮົາບໍ່ປະກົດເປັນຈິງ, ມີຄວາມ
ວ່າ: ຕາບໃດທີ່ເຈົ້າຈະບໍ່ຮັກສາບັນຍັດຂອງ
ເຮົາ, ເຈົ້າຈະບໍ່ຮຸ່ງເຮືອງຢູ່ໃນແຜ່ນດິນ.
7 ດັ່ງນັ້ນ, ພຣະຜູ້ເປັນເຈົ້າໄດ້ສະເດັດມາ
ຢ້ຽມຢາມພວກເຂົາດ້ວຍການພິພາກສາ
ອັນໃຫຍ່ຫລວງ; ເຖິງຢ່າງໃດກໍຕາມ, ພຣະ
ອົງໄດ້ໄວ້ຊີວິດຄົນຊອບທຳ ເພື່ອພວກເຂົາ
ຈະບໍ່ຕາຍ, ແຕ່ຈະປົດປ່ອຍພວກເຂົາໃຫ້
ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ມອບແຜ່ນຈາລຶກໃຫ້ເຄມິດນ້ອງ
ຊາຍຂອງຂ້າພະເຈົ້າ.
9 ບັດ ນີ້ຂ້າພະເຈົ້າເຄມິດຈະບັນທຶກໄວ້
ຈັກ ສອງ ສາມ ເລື່ອງ ໄວ້ໃນ ໜັງສື ເຫລັ້ມ
ດຽວກັນກັບທີ່ອ້າຍຂອງຂ້າພະເຈົ້າໄດ້ບັນ
ທຶກໄວ້; ເພາະຈົ່ງເບິ່ງ, ຂ້າພະເຈົ້າໄດ້ເຫັນ
ເລື່ອງສຸດທ້າຍທີ່ລາວໄດ້ຂຽນໄວ້ດ້ວຍມື
ຂອງລາວເອງ; ແລະ ລາວຂຽນໄວ້ໃນມື້ທີ່
ລາວມອບມັນໃຫ້ຂ້າພະເຈົ້າ. ແລະ ພວກ
ເຮົາຮັກສາແຜ່ນຈາລຶກຕາມວິທີນີ້ເພາະ
ມັນເປັນຄຳສັ່ງຂອງບັນພະບຸລຸດຂອງພວກ
ເຮົາ. ແລະ ຂ້າພະເຈົ້າຂໍຈົບພຽງເທົ່ານີ້.
10 ຈົ່ງເບິ່ງ, ຂ້າພະເຈົ້າອະບີນາໂດມຜູ້

**1** 3 *ກ* ຢຄ 1:1–4; ຈຣ 1:15. 5 *ກ* ຈຣ 1:9–10.

ເປັນລູກຊາຍຂອງເຄມິດ. ຈົ່ງເບິ່ງ, ເຫດການ
ໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ເຫັນສົງຄາມ
ແລະ ການຂັດແຍ້ງມາຫລາຍລະຫວ່າງຊາວ
ນີໄຟຜູ້ຄົນຂອງຂ້າພະເຈົ້າກັບຊາວເລມັນ;
ແລະ ດ້ວຍດາບຂອງຂ້າພະເຈົ້າເອງ, ຂ້າພະ
ເຈົ້າໄດ້ເອົາຊີວິດຂອງຊາວເລມັນມາເປັນ
ຈຳນວນຫລວງຫລາຍ ແລ້ວໃນການປ້ອງ
ກັນພີ່ນ້ອງຂອງຂ້າພະເຈົ້າ.
11 ແລະ ຈົ່ງເບິ່ງ, ບັນທຶກຂອງຜູ້ຄົນພວກ
ນີ້ມີຂຽນໄວ້ໃນແຜ່ນຈາລຶກ ຊຶ່ງເປັນຂອງ
ກະສັດຕາມຊົ່ວອາຍຸຄົນ, ແລະ ຂ້າພະເຈົ້າ
ບໍ່ຮູ້ເລື່ອງການເປີດເຜີຍ ຫລື ເລື່ອງການ
ທຳນາຍນອກຈາກທີ່ມີບັນທຶກໄວ້; ດັ່ງນັ້ນ,
ເລື່ອງທີ່ບັນທຶກໄວ້ກໍພຽງພໍແລ້ວ. ແລະ ຂ້າ
ພະເຈົ້າຂໍຈົບພຽງເທົ່ານີ້.
12 ຈົ່ງເບິ່ງ, ຂ້າພະເຈົ້າອາມາລະໄຄຜູ້
ເປັນລູກຊາຍຂອງອະບິນາໂດມ. ຈົ່ງເບິ່ງ,
ຂ້າພະເຈົ້າຈະເວົ້າກັບພວກທ່ານບາງຢ່າງ
ກ່ຽວກັບໂມໄຊຢາຜູ້ໄດ້ຮັບການແຕ່ງຕັ້ງໃຫ້
ເປັນກະສັດປົກຄອງແຜ່ນດິນເຊຣາເຮັມລາ;
ເພາະຈົ່ງເບິ່ງ, ໂດຍທີ່ພຣະຜູ້ເປັນເຈົ້າໄດ້
ເຕືອນເພິ່ນໃຫ້ໜີໄປຈາກແຜ່ນດິນ [ກ]ນີໄຟ,
ແລະ ຜູ້ໃດທີ່ເຊື່ອຟັງສຸລະສຽງຂອງພຣະຜູ້
ເປັນເຈົ້າກໍໄດ້ [ຂ]ອອກຈາກແຜ່ນດິນພ້ອມ
ກັບເພິ່ນໄປໃນຖິ່ນແຫ້ງແລ້ງກັນດານ—
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ເຮັດຕາມທີ່ພຣະຜູ້ເປັນເຈົ້າບັນຊາ. ແລະ
ຫລາຍຕໍ່ຫລາຍຄົນທີ່ເຊື່ອຟັງສຸລະສຽງຂອງ
ພຣະຜູ້ເປັນເຈົ້າຈຶ່ງອອກຈາກແຜ່ນດິນໄປ
ໃນຖິ່ນແຫ້ງແລ້ງກັນດານ, ແລະ ພວກເຂົາ
ຖືກນຳພາໄປໂດຍການສັ່ງສອນ ແລະ ການ
ທຳນາຍຫລາຍຢ່າງ. ແລະ ພວກເຂົາໄດ້
ຮັບການຕັກເຕືອນຢູ່ຕະຫລອດເວລາໂດຍ
ພຣະຄຳຂອງພຣະເຈົ້າ; ແລະ ພວກເຂົາ
ຖືກນຳໄປໂດຍອຳນາດຂອງພຣະຫັດຂອງ
ພຣະອົງຕະຫລອດເວລາໃນຖິ່ນແຫ້ງແລ້ງ
ກັນດານ ຈົນລົງມາຮອດແຜ່ນດິນທີ່ເອີ້ນວ່າ
ແຜ່ນດິນເຊຣາເຮັມລາ.
14 ແລະ ພວກເຂົາໄດ້ພົບເຫັນຄົນພວກ
ໜຶ່ງທີ່ມີຊື່ວ່າ ຜູ້ຄົນຂອງ [ກ]ເຊຣາເຮັມລາ.
ບັດນີ້, ມັນມີຄວາມປິຕິຍິນດີຢ່າງຍິ່ງໃນບັນ
ດາຜູ້ຄົນຂອງເຊຣາເຮັມລາ; ແລະ ຊາວ
ເຊຣາເຮັມລາຊື່ນຊົມຢ່າງຍິ່ງເພາະວ່າພຣະ
ຜູ້ເປັນເຈົ້າໄດ້ສົ່ງຜູ້ຄົນຂອງໂມໄຊຢາມາ
ພ້ອມກັບ [ຂ]ແຜ່ນຈາລຶກທອງເຫລືອງຊຶ່ງມີ
ບັນທຶກຂອງຊາວຢິວ.
15 ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື
ໂມໄຊຢາໄດ້ຄົ້ນພົບວ່າ [ກ]ຜູ້ຄົນຂອງເຊຣາ
ເຮັມລາໄດ້ອອກມາຈາກເຢຣູຊາເລັມໃນ
ເວລາທີ່ [ຂ]ເຊເດກີຢາເປັນກະສັດຂອງຢູດາ
ຊຶ່ງຖືກຈັບໄປເປັນຊະເລີຍໃນບາບີໂລນ.
16 ແລະ ພວກນີ້ໄດ້ເດີນທາງໄປໃນຖິ່ນ
ແຫ້ງແລ້ງກັນດານ ແລະ ຖືກພາໄປໂດຍ
ພຣະຫັດຂອງພຣະຜູ້ເປັນເຈົ້າ ຂ້າມຜືນນ້ຳ
ອັນກວ້າງໃຫຍ່ໄປຫາແຜ່ນດິນທີ່ໂມໄຊຢາ
ພົບເຫັນພວກເຂົາ; ແລະ ພວກເຂົາໄດ້ຕັ້ງ
ຖິ່ນຖານຢູ່ບ່ອນນັ້ນນັບຕັ້ງແຕ່ເວລານັ້ນມາ.
17 ແລະ ເວລາທີ່ໂມໄຊຢາຄົ້ນພົບພວກ
ນີ້, ພວກເຂົາມີຜູ້ຄົນເປັນຈຳນວນຫລວງ
ຫລາຍ. ເຖິງຢ່າງໃດກໍຕາມ, ພວກເຂົາຍັງ
ມີສົງຄາມ ແລະ ການຂັດແຍ້ງຢ່າງຮຸນແຮງ
ຫລາຍເທື່ອ, ແລະ ມີການລົ້ມຕາຍດ້ວຍ
ດາບເປັນບາງຄັ້ງ; ແລະ ພາສາຂອງພວກ
ເຂົາໄດ້ປ່ຽນແປງໄປ; ທັງພວກເຂົາບໍ່ໄດ້
ເອົາ [ກ]ບັນທຶກມານຳ, ແລະ ພວກເຂົາປະຕິ
ເສດການເປັນຢູ່ຂອງພຣະຜູ້ສ້າງຂອງພວກ

12 ກ 2 ນຟ 5:6–9.
ຂ ຢຄ 3:4.
ຂ 1 ນຟ 3:3, 19–20; 5:10–22.
14 ກ ຄມພ ເຊຣາເຮັມລາ.
ຂ ຢມຢ 39:1–10; ຣລມ 8:21.
15 ກ ມຊຢ 25:2.
17 ກ ມຊຢ 1:2–6.

ເຂົາ; ແລະ ໂມໄຊຢາ, ທັງຜູ້ຄົນຂອງໂມໄຊ
ຢາຈຶ່ງບໍ່ສາມາດເຂົ້າໃຈພວກນີ້ໄດ້.
18 ແຕ່ເຫດການໄດ້ບັງເກີດຂຶ້ນຄື ໂມໄຊ
ຢາໃຫ້ພວກນີ້ໄດ້ຮັບການສິດສອນໃນພາ
ສາຂອງເພິ່ນ. ແລະ ເຫດການໄດ້ບັງເກີດ
ຂຶ້ນຄື ຫລັງຈາກທີ່ພວກເຂົາໄດ້ຮັບການສິດ
ສອນໃນພາສາຂອງໂມໄຊຢາແລ້ວ, ຊາວ
ເຊຣາເຮັມລາ ຈຶ່ງໃຫ້ລຳດັບການສືບເຊື້ອ
ສາຍຂອງບັນພະບຸລຸດຂອງພວກເຂົາຕາມ
ຄວາມຊົງຈຳຂອງພວກເຂົາ; ແລະ ເລື່ອງ
ເຫລົ່ານີ້ມີບັນທຶກໄວ້, ແຕ່ບໍ່ໄດ້ຢູ່ໃນແຜ່ນ
ຈາລຶກເຫລົ່ານີ້.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນຂອງເຊຣາເຮັມລາກັບຜູ້ຄົນຂອງໂມໄຊ
ຢາໄດ້ມາ [ກ]ເຕົ້າໂຮມກັນ, ແລະ [ຂ]ໂມໄຊຢາ
ໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດຂອງພວກ
ເຂົາ.
20 ແລະ ເຫດການໄດ້ບັງເກີດຂຶ້ນໃນ
ວັນເວລາຂອງໂມໄຊຢາມີຫີນໃຫຍ່ກ້ອນ
ໜຶ່ງຊຶ່ງມີອັກຂະລະໃນນັ້ນຖືກນຳມາໃຫ້
ເພິ່ນ; ແລະ ເພິ່ນໄດ້ [ກ]ແປຄວາມໝາຍ
ຂອງອັກຂະລະດ້ວຍຂອງປະທານ ແລະ
ອຳນາດຂອງພຣະເຈົ້າ.
21 ແລະ ມັນເປັນເລື່ອງລາວຂອງຄົນຜູ້
ໜຶ່ງຊື່ວ່າ [ກ]ໂຄຣິອານທະເມີກັບຜູ້ຄົນຂອງ
ລາວທີ່ໄດ້ຖືກຂ້າຕາຍ. ແລະ ຜູ້ຄົນຂອງ
ເຊຣາເຮັມລາໄດ້ພົບ ໂຄຣິອານທະເມີ;
ແລະ ລາວໄດ້ຢູ່ກັບຄົນພວກນີ້ເປັນເວລາ
ເກົ້າເດືອນ.
22 ມັນໄດ້ກ່າວຂໍ້ຄວາມກ່ຽວກັບບັນພະ
ບຸລຸດຂອງລາວບາງເລັກໜ້ອຍ. ແລະ ບິດາ
ມານດາຜູ້ທຳອິດຂອງລາວທີ່ໄດ້ອອກມາ
ຈາກ [ກ]ຫໍສູງໃນເວລາທີ່ພຣະຜູ້ເປັນເຈົ້າເຮັດ
ໃຫ້ພາສາຂອງຄົນ [ຂ]ສັບສົນ; ແລະ ຄວາມ
ຮຸນແຮງຂອງພຣະຜູ້ເປັນເຈົ້າມາຫາພວກ
ເຂົາຕາມການພິພາກສາຂອງພຣະອົງຊຶ່ງ
ທ່ຽງທຳ; ແລະ [ຄ]ກະດູກຂອງພວກເຂົາວາງ
ກະຈັດກະຈາຍຢູ່ໃນແຜ່ນດິນທາງເໜືອ.
23 ຈົ່ງເບິ່ງ, ຂ້າພະເຈົ້າອາມາລະໄຄໄດ້
ເກີດໃນວັນເວລາຂອງໂມໄຊຢາ; ແລະ ຂ້າ
ພະເຈົ້າມີຊີວິດຢູ່ຈົນເຫັນການສິ້ນຊີວິດຂອງ
ເພິ່ນ; ແລະ [ກ]ເບັນຢາມິນລູກຊາຍຂອງເພິ່ນ
ໄດ້ຂຶ້ນປົກຄອງລາຊາບັນລັງແທນເພິ່ນ.
24 ແລະ ຈົ່ງເບິ່ງ, ໃນວັນເວລາຂອງ
ກະສັດເບັນຢາມິນ, ຂ້າພະເຈົ້າໄດ້ເຫັນສົງ
ຄາມອັນຮ້າຍແຮງ ແລະ ການນອງເລືອດ
ລະຫວ່າງຊາວນີໄຟກັບຊາວເລມັນ. ແຕ່ຈົ່ງ
ເບິ່ງ, ຊາວນີໄຟໄດ້ປຽບພວກນັ້ນຫລາຍ;
ແທ້ຈິງແລ້ວ, ເຖິງຂະໜາດທີ່ກະສັດເບັນ
ຢາມິນໄດ້ຂັບໄລ່ພວກເຂົາອອກຈາກແຜ່ນ
ດິນເຊຣາເຮັມລາ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າກໍເລີ່ມເຖົ້າແກ່ລົງ; ແລະ ໂດຍທີ່
ບໍ່ມີລູກຈັກຄົນ, ແລະ ໂດຍທີ່ຮູ້ວ່າກະສັດ
[ກ]ເບັນຢາມິນເປັນກະສັດທີ່ທ່ຽງທຳຕໍ່ພຣະ
ພັກຂອງພຣະຜູ້ເປັນເຈົ້າ, ດັ່ງນັ້ນ, ຂ້າພະ
ເຈົ້າຈຶ່ງ [ຂ]ມອບແຜ່ນຈາລຶກເຫລົ່ານີ້ໃຫ້
ເພິ່ນ, ເພື່ອຈະໄດ້ຊັກຊວນມະນຸດທັງປວງ
ໃຫ້ມາຫາພຣະເຈົ້າ, ແລະ ພຣະຜູ້ບໍລິສຸດ
ຂອງອິດສະຣາເອນ, ແລະ ເຊື່ອໃນການ
ທຳນາຍ, ແລະ ການເປີດເຜີຍ, ແລະ ການ
ປະຕິບັດສາດສະໜາກິດຂອງເຫລົ່າທູດ,

19 ກ ມຊຢ 25:13.
ຂ ອມນ 1:12.
20 ກ ມຊຢ 8:13–19.
ຄມພ ຜູ້ພະຍາກອນ.
21 ກ ອທ 12:1.
ຄມພ ໂຄຣິອານທະເມີ.
22 ກ ອທ 1:1–5.
ຂ ປຖກ 11:6–9;
ມຊຢ 28:17;
ອທ 1:33.
ຄ ມຊຢ 8:8.
23 ກ ຄມ 1:3.
25 ກ ຄມ 1:17–18;
ມຊຢ 29:13.
ຂ ຄມ 1:10.

ແລະ ໃນ ຂອງປະທານ ແຫ່ງ ການ ເວົ້າ ພາ
ສາ, ແລະ ໃນຂອງປະທານແຫ່ງການແປ
ພາສາ, ແລະ ໃນທຸກສິ່ງທີ່ [ຄ]ດີ; ເພາະບໍ່ມີ
ສິ່ງໃດເລີຍທີ່ດີນອກຈາກມັນມາຈາກພຣະ
ຜູ້ເປັນເຈົ້າ: ແລະ ສິ່ງທີ່ບໍ່ດີມາຈາກມານ.
26 ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຂ້າພະເຈົ້າຢາກໃຫ້ພວກທ່ານ
[ກ]ມາຫາພຣະຄຣິດ, ຜູ້ເປັນພຣະຜູ້ບໍລິສຸດ
ຂອງອິດສະຣາເອນ, ແລະ ຮັບສ່ວນຄວາມ
ລອດຈາກພຣະອົງ, ແລະ ອຳນາດແຫ່ງ
ການໄຖ່ຂອງພຣະອົງ. ແທ້ຈິງແລ້ວ, ຈົ່ງມາ
ຫາພຣະອົງເຖີດ, ແລະ [ຂ]ຖວາຍທັງຈິດວິນ
ຍານຂອງພວກທ່ານເປັນ [ຄ]ເຄື່ອງບູຊາແດ່
ພຣະອົງ, ແລະ [ງ]ຖືສິນອົດເຂົ້າ ແລະ ອະ
ທິຖານຕໍ່ໄປ, ແລະ ອົດທົນຈົນເຖິງທີ່ສຸດ;
ແລະ ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະ
ຊົນຢູ່ ພວກທ່ານຈະລອດ.
27 ແລະ ບັດນີ້ຂ້າພະເຈົ້າຈະເວົ້າບາງ
ຢ່າງກ່ຽວກັບຄົນກຸ່ມໜຶ່ງທີ່ຂຶ້ນໄປໃນຖິ່ນ
ແຫ້ງແລ້ງກັນດານ ເພື່ອກັບໄປຫາແຜ່ນ
ດິນນີໄຟ; ເພາະມີຄົນເປັນຈຳນວນຫລວງ
ຫລາຍທີ່ປາດຖະໜາຈະເປັນເຈົ້າຂອງແຜ່ນ
ດິນຊຶ່ງເປັນມູນມໍລະດົກຂອງພວກເຂົາ.
28 ດັ່ງນັ້ນ, ພວກເຂົາຈຶ່ງຂຶ້ນໄປໃນຖິ່ນ
ແຫ້ງແລ້ງກັນດານ. ແລະ ໂດຍທີ່ຜູ້ນຳພວກ
ເຂົາເປັນຄົນແຂງແຮງ ແລະ ມີພະລັງ, ແລະ
ເປັນຄົນແຂງຄໍ, ດັ່ງນັ້ນ, ລາວຈຶ່ງເຮັດໃຫ້
ເກີດການຂັດແຍ້ງກັນໃນບັນດາພວກເຂົາ
ເອງ; ແລະ ພວກເຂົາຖືກ [ກ]ຂ້າຕາຍໝົດໃນ
ຖິ່ນແຫ້ງແລ້ງກັນດານ ນອກຈາກຄົນຫ້າ
ສິບຄົນເທົ່ານັ້ນ, ແລະ ຄົນເຫລົ່ານັ້ນໄດ້ກັບ
ຄືນມາຫາແຜ່ນດິນເຊຣາເຮັມລາ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ພາຄົນພວກອື່ນໆໄປອີກເປັນ
ຈຳນວນຫລວງຫລາຍ, ແລະ ອອກເດີນ
ທາງໄປໃນຖິ່ນແຫ້ງແລ້ງກັນດານ.
30 ແລະ ຂ້າພະເຈົ້າອາມາລະໄຄມີນ້ອງ
ຊາຍຢູ່ຄົນໜຶ່ງທີ່ໄປນຳຄົນເຫລົ່ານັ້ນຄືກັນ;
ແລະ ຕັ້ງແຕ່ນັ້ນມາ ຂ້າພະເຈົ້າບໍ່ໄດ້ຍິນ
ກ່ຽວກັບຄົນເຫລົ່ານັ້ນເລີຍ. ແລະ ຂ້າພະ
ເຈົ້າກຳລັງຈະລົງໄປນອນໃນຫລຸມສົບຂອງ
ຂ້າພະເຈົ້າ; ແລະ [ກ]ແຜ່ນຈາລຶກເຫລົ່ານີ້ກໍ
ເຕັມແລ້ວ. ແລະ ຂ້າພະເຈົ້າຂໍຈົບຄຳເວົ້າ
ຂອງຂ້າພະເຈົ້າໄວ້ພຽງເທົ່ານີ້.

# ຄຳຂອງມໍມອນ

*ມໍມອນຫຍໍ້ແຜ່ນຈາລຶກໃຫຍ່ຂອງນີໄຟ—ເພິ່ນເອົາແຜ່ນຈາລຶກນ້ອຍໄວ້ກັບແຜ່ນຈາລຶກອື່ນໆ—ກະສັດເບັນຢາມິນສະຖາປະນາສັນຕິສຸກໃນແຜ່ນດິນ. ປະມານ ຄ.ສ. 385.*

1 ແລະ ບັດນີ້ຂ້າພະເຈົ້າ [ກ]ມໍມອນໂດຍ
ທີ່ກຳລັງຈະມອບບັນທຶກທີ່ຂ້າພະເຈົ້າເຮັດ
ໄວ້ໃຫ້ຢູ່ໃນມືຂອງໂມໂຣໄນຜູ້ເປັນລູກຊາຍ
ຂອງຂ້າພະເຈົ້າ, ຈົ່ງເບິ່ງ, ຂ້າພະເຈົ້າໄດ້
ເຫັນຄວາມພິນາດເກືອບທັງໝົດຂອງຊາວ

25 *ຄ* ແອວ 5:40; ອທ 4:12; ມຣນ 7:15–17.
26 *ກ* ຢຄ 1:7; ແອວ 29:2; ມຣນ 10:32.
*ຂ* ຄມພ ເສຍສະລະ, ການເສຍສະລະ.
*ຄ* 3 ນຟ 9:20.
*ງ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
28 *ກ* ມຊຢ 9:1–4.
30 *ກ* 1 ນຟ 6.
[ຄຳຂອງມໍມອນ]
**1** 1 *ກ* 3 ນຟ 5:9–12; ມມ 1:1–4; 8:1, 4–5. ຄມພ ມໍມອນ, ສາດສະດາຊາວນີໄຟ.

ນີໄຟຜູ້ຄົນຂອງຂ້າພະເຈົ້າ.

2 ແລະ ເປັນເວລາ [ກ]ຫລາຍຮ້ອຍປີຫລັງ
ຈາກການສະເດັດມາຂອງພຣະຄຣິດ ຂ້າ
ພະເຈົ້າໄດ້ມອບບັນທຶກເຫລົ່ານີ້ໃຫ້ຢູ່ໃນມື
ຂອງລູກຊາຍຂອງຂ້າພະເຈົ້າ; ແລະ ຂ້າພະ
ເຈົ້າຄິດວ່າ ລາວຈະເຫັນຄວາມພິນາດທັງ
ໝົດຂອງປະຊາຊົນຂອງຂ້າພະເຈົ້າ. ແຕ່ຂໍ
ພຣະເຈົ້າຈົ່ງໂຜດໃຫ້ລາວລອດຊີວິດດ້ວຍ
ເຖີດ, ເພື່ອວ່າລາວຈະໄດ້ບັນທຶກບາງຢ່າງ
ກ່ຽວກັບພວກນັ້ນໄວ້, ແລະ ກ່ຽວກັບພຣະ
ຄຣິດ, ເພື່ອມື້ໜຶ່ງມັນອາດຈະເປັນ [ຂ]ປະ
ໂຫຍດແກ່ພວກເຂົາ.

3 ແລະ ບັດນີ້ຂ້າພະເຈົ້າຈະເວົ້າກ່ຽວກັບ
ສິ່ງທີ່ຂ້າພະເຈົ້າໄດ້ບັນທຶກໄວ້ບາງຢ່າງ;
ເພາະຫລັງຈາກຂ້າພະເຈົ້າ [ກ]ຫຍໍ້ຂໍ້ຄວາມ
ຈາກ [ຂ]ແຜ່ນຈາລຶກຂອງນີໄຟລົງມາຈົນເຖິງ
ການປົກຄອງຂອງກະສັດເບັນຢາມິນ ຊຶ່ງ
ເປັນຜູ້ທີ່ອາມາລະໄຄໄດ້ເວົ້າເຖິງ, ຂ້າພະ
ເຈົ້າໄດ້ຄົ້ນຄວ້າຈາກ [ຄ]ບັນທຶກຊຶ່ງໄດ້ມອບ
ໃຫ້ຢູ່ໃນມືຂອງຂ້າພະເຈົ້າ, ແລະ ຂ້າພະ
ເຈົ້າໄດ້ເຫັນແຜ່ນຈາລຶກເຫລົ່ານີ້ຊຶ່ງມີເລື່ອງ
ລາວສັ້ນໆຂອງສາດສະດານັບຕັ້ງແຕ່
ຢາໂຄບລົງມາຈົນເຖິງການປົກຄອງຂອງ
ກະສັດ [ງ]ເບັນຢາມິນຜູ້ນີ້, ແລະ ມີຄຳເວົ້າ
ຂອງນີໄຟຢູ່ໃນນັ້ນ.

4 ແລະ ເລື່ອງທີ່ມີຢູ່ໃນແຜ່ນຈາລຶກເຫລົ່າ
ນີ້ເປັນທີ່ [ກ]ພໍໃຈຂອງຂ້າພະເຈົ້າ, ເພາະຄຳ
ທຳນາຍເຖິງການສະເດັດມາຂອງພຣະ
ຄຣິດ; ແລະ ບັນພະບຸລຸດຂອງຂ້າພະເຈົ້າ
ກໍຮູ້ວ່າຄຳທຳນາຍຫລາຍຢ່າງສຳເລັດ
ແລ້ວ; ແທ້ຈິງແລ້ວ, ແລະ ຂ້າພະເຈົ້າຮູ້
ອີກວ່າ ຫລາຍເລື່ອງທີ່ໄດ້ທຳນາຍໄວ້ກ່ຽວ
ກັບພວກເຮົາຈົນເຖິງທຸກມື້ນີ້ສຳເລັດແລ້ວ,
ແລະ ຫລາຍເລື່ອງນັບແຕ່ ຕໍ່ຈາກມື້ນີ້ເປັນ
ຕົ້ນໄປຈະຕ້ອງເກີດຂຶ້ນຢ່າງແນ່ນອນ—

5 ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເລືອກ [ກ]ສິ່ງ
ເຫລົ່ານີ້ໄວ້ເພື່ອຈົບການບັນທຶກຂອງຂ້າ
ພະເຈົ້າໄວ້ໃນນັ້ນ, ຊຶ່ງຕອນທີ່ເຫລືອນັ້ນຂ້າ
ພະເຈົ້າຈະເອົາມາຈາກ [ຂ]ແຜ່ນຈາລຶກຂອງ
ນີໄຟ; ແລະ ຂ້າພະເຈົ້າບັນທຶກໄວ້ບໍ່ໄດ້ພໍ
[ຄ]ໜຶ່ງສ່ວນຮ້ອຍຂອງເລື່ອງຜູ້ຄົນຂອງຂ້າ
ພະເຈົ້າເລີຍ.

6 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຈະເອົາແຜ່ນ
ຈາລຶກເຫລົ່ານີ້, ຊຶ່ງມີຄຳທຳນາຍ ແລະ
ການເປີດເຜີຍ, ແລະ ເອົາໃສ່ໄວ້ກັບສ່ວນ
ທີ່ເຫລືອຢູ່ຂອງບັນທຶກຂອງຂ້າພະເຈົ້າ,
ເພາະວ່າເລື່ອງເຫລົ່ານີ້ປະເສີດສຳລັບຂ້າ
ພະເຈົ້າ; ແລະ ຂ້າພະເຈົ້າຮູ້ວ່າ ມັນຈະປະ
ເສີດສຳລັບພີ່ນ້ອງຂອງຂ້າພະເຈົ້າອີກ.

7 ແລະ ຂ້າພະເຈົ້າກະທຳການນີ້ເພື່ອຈຸດ
ປະສົງ [ກ]ອັນສະຫລາດ; ເພາະພຣະອົງໄດ້
ສີ່ມໃສ່ຫູຂອງຂ້າພະເຈົ້າແບບນີ້, ອັນເປັນ
ໄປຕາມການເຮັດວຽກຂອງພຣະວິນຍານ
ຂອງພຣະຜູ້ເປັນເຈົ້າຊຶ່ງຢູ່ໃນຕົວຂອງຂ້າ
ພະເຈົ້າ. ແລະ ບັດນີ້, ຂ້າພະເຈົ້າບໍ່ຮູ້ຈັກ
ໝົດທຸກເລື່ອງ; ແຕ່ວ່າພຣະຜູ້ເປັນເຈົ້າ [ຂ]ຮູ້
ທຸກເລື່ອງທີ່ຈະມາເຖິງ; ດັ່ງນັ້ນ, ພຣະອົງຈຶ່ງ
ທຳງານໃນຂ້າພະເຈົ້າເພື່ອໃຫ້ມັນເປັນໄປ
ຕາມພຣະປະສົງຂອງພຣະອົງ.

8 ແລະ [ກ]ຄຳອະທິຖານຂອງຂ້າພະເຈົ້າ
ທີ່ມີຕໍ່ພຣະເຈົ້າກ່ຽວກັບພີ່ນ້ອງຂອງຂ້າພະ
ເຈົ້າ ກໍເພື່ອພວກເຂົາຈະມາຫາຄວາມຮູ້

2 ກ ມມ 6:5–6.
ຂ ຄພ 3:16–20.
3 ກ ຄພ 10:44.
ຂ ຄພ 10:38–40.
ຄ ມຊຢ 1:6; ຮລມ 3:13–15; ມມ 4:23.
ງ ອມນ 1:23.
4 ກ 1 ນຟ 6:5.
5 ກ ອສ ສິ່ງເປັນທີ່ພໍໃຈຂອງເພິ່ນ, ກ່າວເຖິງໃນ ຂໍ້ທີ 4.
ຂ 1 ນຟ 9:2.
ຄ 3 ນຟ 5:8–11; 26:6–12.
7 ກ 1 ນຟ 9:5; 19:3; ຄພ 3:12–20; 10:1–19, 30–47.
ຂ ຄມພ ຮອບຮູ້ທຸກຢ່າງ.
8 ກ 2 ນຟ 33:3–4; ອນ 1:11–12.

ເລື່ອງພຣະເຈົ້າອີກເທື່ອໜຶ່ງ, ແທ້ຈິງແລ້ວ,
ເລື່ອງການໄຖ່ຂອງພຣະຄຣິດ; ເພື່ອພວກ
ເຂົາຈະເປັນຜູ້ຄົນ [ຂ]ທີ່ໜ້າຊົມອີກເທື່ອໜຶ່ງ.
9 ແລະ ບັດນີ້ຂ້າພະເຈົ້າມໍມອນເລີ່ມເຮັດ
ບັນທຶກຂອງຂ້າພະເຈົ້າໃຫ້ຈົບ, ຊຶ່ງໄດ້ເອົາ
ມາຈາກແຜ່ນຈາລຶກຂອງນີໄຟ; ແລະ ຂ້າ
ພະເຈົ້າເຮັດບັນທຶກຕາມຄວາມຮູ້ ແລະ
ຄວາມເຂົ້າໃຈຊຶ່ງພຣະເຈົ້າໄດ້ປະທານໃຫ້
ແກ່ຂ້າພະເຈົ້າ.
10 ດັ່ງນັ້ນ, ເຫດການໄດ້ບັງເກີດຂຶ້ນ
ຫລັງຈາກອາມາລະໄຄໄດ້ [ກ]ມອບແຜ່ນ
ຈາລຶກເຫລົ່ານີ້ໃຫ້ຢູ່ໃນມືຂອງກະສັດເບັນ
ຢາມິນແລ້ວ, ເພິ່ນຈຶ່ງໄດ້ເອົາມັນໄປຮວມ
ໄວ້ກັບ [ຂ]ແຜ່ນຈາລຶກອື່ນໆ, ຊຶ່ງມີບັນທຶກທີ່
[ຄ]ກະສັດມອບໃຫ້ຕໍ່ໆກັນລົງມາຈາກລຸ້ນສູ່
ລຸ້ນ ຈົນເຖິງວັນຂອງກະສັດເບັນຢາມິນ.
11 ແລະ ມັນໄດ້ຖືກສົ່ງຕໍ່ລົງມາຈາກ
ກະສັດເບັນຢາມິນ, ຈາກລຸ້ນສູ່ລຸ້ນ ຈົນມາ
ຕົກຢູ່ໃນ [ກ]ມືຂອງຂ້າພະເຈົ້າ. ແລະ ຂ້າ
ພະເຈົ້າມໍມອນອະທິຖານຕໍ່ພຣະເຈົ້າຂໍໃຫ້
ແຜ່ນຈາລຶກໄດ້ຮັບການປົກປັກຮັກສານັບ
ແຕ່ເວລານີ້ໄປ, ແລະ ຂ້າພະເຈົ້າຮູ້ວ່າ ມັນ
ຈະໄດ້ຮັບການປົກປັກຮັກສາເພາະວ່າ
ເລື່ອງສຳຄັນໄດ້ບັນທຶກໄວ້ຢູ່ໃນນັ້ນ ຊຶ່ງ
ຈາກນັ້ນຜູ້ຄົນຂອງຂ້າພະເຈົ້າພ້ອມດ້ວຍພີ່
ນ້ອງຂອງພວກເຂົາຈະຖືກ [ຂ]ຕັດສິນໃນວັນ
ອັນຍິ່ງໃຫຍ່ ແລະ ສຸດທ້າຍ, ຕາມພຣະຄຳ
ຂອງພຣະເຈົ້າຊຶ່ງມີຂຽນໄວ້.
12 ແລະ ບັດນີ້, ກ່ຽວກັບກະສັດເບັນຢາ
ມິນຜູ້ນີ້—ເພິ່ນມີບັນຫາບາງຢ່າງເຊັ່ນ ມັນ
ມີການຂັດແຍ້ງເລັກໜ້ອຍ ລະຫວ່າງຜູ້ຄົນ
ຂອງເພິ່ນເອງ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງ
ທະຫານຂອງຊາວເລມັນໄດ້ຍົກທັບລົງມາ
ຈາກ [ກ]ແຜ່ນດິນນີໄຟ ເພື່ອມາສູ້ຮົບກັບຜູ້
ຄົນຂອງເພິ່ນ. ແຕ່ຈົ່ງເບິ່ງ, ກະສັດເບັນຢາ
ມິນໄດ້ເຕົ້າໂຮມກອງທັບຂອງເພິ່ນ, ແລະ
ເພິ່ນໄດ້ຕ້ານພວກນັ້ນໄວ້ໄດ້; ແລະ ເພິ່ນ
ໄດ້ຕໍ່ສູ້ດ້ວຍກຳລັງແຂນຂອງເພິ່ນເອງດ້ວຍ
[ຂ]ດາບຂອງລາບານ.
14 ແລະ ດ້ວຍກຳລັງຂອງພຣະຜູ້ເປັນ
ເຈົ້າ ພວກເຂົາຈຶ່ງໄດ້ຕໍ່ສູ້ສັດຕູຂອງພວກ
ເຂົາ, ຈົນຂ້າຊາວເລມັນຕາຍຫລາຍພັນ
ຄົນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ຕໍ່ສູ້ກັບຊາວເລມັນຈົນຂັບໄລ່ພວກ
ເຂົາອອກຈາກແຜ່ນດິນທັງໝົດ ຊຶ່ງເປັນ
ແຜ່ນດິນມູນມໍລະດົກຂອງພວກເຂົາ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກມີ [ກ]ພຣະຄຣິດປອມຂຶ້ນມາ, ແລະ
ປາກຂອງພວກເຂົາຖືກປິດ, ແລະ ຖືກລົງ
ໂທດຕາມຄວາມຜິດຂອງຕົນ;
16 ແລະ ຫລັງຈາກມີສາດສະດາປອມ,
ແລະ ຜູ້ເທດສະໜາ ແລະ ຄູສອນປອມ
ໃນບັນດາຜູ້ຄົນ, ແລະ ທັງໝົດນີ້ໄດ້ຖືກ
ລົງໂທດຕາມຄວາມຜິດຂອງຕົນ; ແລະ
ຫລັງຈາກມີການຂັດແຍ້ງມາຫລາຍ ແລະ
ມີການແຕກແຍກໄປເຂົ້າຮ່ວມກັບຊາວ
ເລມັນຫລາຍເທື່ອແລ້ວ, ຈົ່ງເບິ່ງ, ເຫດການ
ໄດ້ບັງເກີດຂຶ້ນຄື ກະສັດເບັນຢາມິນ, ດ້ວຍ
ຄວາມຊ່ວຍເຫລືອຈາກ [ກ]ສາດສະດາຜູ້ບໍລິ
ສຸດທີ່ຢູ່ໃນບັນດາຜູ້ຄົນຂອງເພິ່ນ—
17 ເພາະຈົ່ງເບິ່ງ, ກະສັດເບັນຢາມິນ

8 *ຂ* 2 ນຟ 30:6.
10 *ກ* ອມນ 1:25, 30.
*ຂ* 1 ນຟ 9:4.
*ຄ* ຈຣ 1:14.
11 *ກ* 3 ນຟ 5:8–12; ມມ 1:1–5.
*ຂ* 2 ນຟ 25:18; 29:11; 33:11–15; 3 ນຟ 27:23–27.
13 *ກ* ອມນ 1:12.
*ຂ* 1 ນຟ 4:9; 2 ນຟ 5:14; ຢຄ 1:10; ມຊຢ 1:16; ຄພ 17:1.
15 *ກ* ຄມພ ຜູ້ຕໍ່ຕ້ານພຣະຄຣິດ.
16 *ກ* ອນ 1:22.

ເປັນຄົນ [ກ]ບໍລິສຸດ, ແລະ ເພິ່ນໄດ້ປົກຄອງ
ດູແລຜູ້ຄົນຂອງເພິ່ນ ດ້ວຍຄວາມຊອບທຳ;
ແລະ ມີຄົນບໍລິສຸດຢ່າງຫລວງຫລາຍໃນ
ແຜ່ນດິນ, ແລະ ຄົນເຫລົ່ານີ້ໄດ້ເວົ້າພຣະ
ຄຳຂອງພຣະເຈົ້າດ້ວຍ [ຂ]ອຳນາດ ແລະ
ສິດອຳນາດ; ແລະ ເຂົາເຈົ້າໄດ້ໃຊ້ [ຄ]ຄວາມ
ຮຸນແຮງຫລາຍເພາະຄວາມແຂງຄໍຂອງຜູ້
ຄົນ—

18 ດັ່ງນັ້ນ, ດ້ວຍຄວາມຊ່ວຍເຫລືອຈາກ
ຄົນເຫລົ່ານີ້, ກະສັດເບັນຢາມິນ, ໂດຍການ
ອອກແຮງງານດ້ວຍສຸດກຳລັງຂອງຮ່າງ
ກາຍຂອງເພິ່ນ ແລະ ດ້ວຍຄວາມສາມາດ
ຂອງຈິດວິນຍານທັງໝົດຂອງເພິ່ນ, ແລະ
ພ້ອມດ້ວຍສາດສະດາ, ເພິ່ນຈຶ່ງໄດ້ສະຖາ
ປະນາສັນຕິສຸກຂຶ້ນໃນແຜ່ນດິນອີກເທື່ອ
ໜຶ່ງ.

# ໜັງສືໂມໄຊຢາ

## ບົດທີ 1

*ກະສັດເບັນຢາມິນສິດສອນພວກລູກຊາຍຂອງເພິ່ນກ່ຽວກັບພາສາ ແລະ ການທຳນາຍຂອງບັນພະບຸລຸດຂອງເຂົາເຈົ້າ—ສາດສະໜາ ແລະ ຄວາມສີວິໄລຖືກເກັບກຳໄວ້ຍ້ອນວ່າໄດ້ບັນທຶກເລື່ອງລາວໄວ້ໃນແຜ່ນຈາລຶກຫລາຍຊຸດທີ່ແຕກຕ່າງກັນ—ໂມໄຊຢາຖືກເລືອກໃຫ້ເປັນກະສັດ ແລະ ເປັນຜູ້ຮັກສາບັນທຶກ ແລະ ສິ່ງຂອງອື່ນໆ. ປະມານ 130–124 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ບໍ່ມີການຂັດແຍ້ງຕໍ່ໄປໃນ
ທົ່ວ [ກ]ແຜ່ນດິນຂອງເຊຣາເຮັມລາ, ໃນບັນ
ດາຜູ້ຄົນທັງໝົດທີ່ຂຶ້ນກັບກະສັດເບັນຢາ
ມິນ, ດັ່ງນັ້ນ ກະສັດເບັນຢາມິນຈຶ່ງປະສົບ
ກັບສັນຕິສຸກຕະຫລອດລາຊາການຂອງ
ເພິ່ນ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ມີລູກຊາຍສາມຄົນ; ແລະ ເພິ່ນໄດ້ຕັ້ງຊື່ໃຫ້
ເຂົາເຈົ້າວ່າ ໂມໄຊຢາ, ຮີໂລຣຳ, ແລະ ຮີລາ
ມັນ. ແລະ ເພິ່ນໄດ້ໃຫ້ເຂົາເຈົ້າ [ກ]ຮຽນ [ຂ]ພາ
ສາທັງໝົດຂອງບັນພະບຸລຸດຂອງເຂົາເຈົ້າ,
ເພື່ອເຂົາເຈົ້າຈະໄດ້ເປັນຄົນສະຫລາດ
ແລະ ຈະໄດ້ຮູ້ກ່ຽວກັບຄຳທຳນາຍຊຶ່ງໄດ້
ເວົ້າອອກຈາກປາກຂອງບັນພະບຸລຸດຂອງ
ເຂົາເຈົ້າ, ຊຶ່ງນຳມາໃຫ້ພວກເຂົາໂດຍພຣະ
ຫັດຂອງພຣະຜູ້ເປັນເຈົ້າເອງ.
3 ແລະ ເພິ່ນໄດ້ສິດສອນເຂົາເຈົ້າກ່ຽວ
ກັບບັນທຶກ ຊຶ່ງມີຂຽນໄວ້ໃນແຜ່ນຈາລຶກ
ທອງເຫລືອງ, ມີຄວາມວ່າ: ລູກເອີຍ, ພໍ່
ຢາກໃຫ້ພວກເຈົ້າຈື່ໄວ້ວ່າ ຖ້າຫາກບໍ່ມີ
[ກ]ແຜ່ນຈາລຶກເຫລົ່ານີ້ ຊຶ່ງມີບັນທຶກຕ່າງໆ
ແລະ ພຣະບັນຍັດເຫລົ່ານີ້ແລ້ວ, ພວກ
ເຮົາຕ້ອງໄດ້ຮັບຄວາມທຸກທໍລະມານຢູ່ໃນ
[ຂ]ຄວາມໂງ່ຈ້າຫລ້າຫລັງຈົນເຖິງປະຈຸບັນນີ້,
ໂດຍບໍ່ຮູ້ຄວາມລຶກລັບຂອງພຣະເຈົ້າເລີຍ.
4 ເພາະມັນເປັນໄປບໍ່ໄດ້ທີ່ລີໄຮບັນພະ
ບຸລຸດຂອງພວກເຮົາຈະຈື່ຈຳເລື່ອງເຫລົ່ານີ້
ໄດ້ທັງໝົດ ເພື່ອສິດສອນລູກຫລານຂອງ
ເພິ່ນນອກຈາກຈະເປັນໄປໂດຍຄວາມ

---

17 *ກ* ແອວ 13:26.
*ຂ* ແອວ 17:2–3.
*ຄ* ມຣນ 9:4;
ຄພ 121:41–43.

[ໂມໄຊຢາ]
**1** 1 *ກ* ອມນ 1:13.
2 *ກ* ມຊຢ 4:14–15;
ຄພ 68:25, 28.
*ຂ* ມມ 9:32.
3 *ກ* ຄມພ ແຜ່ນຈາລຶກ.
*ຂ* ແອວ 37:8–9.

ຊ່ວຍ ເຫລືອ ຈາກ ແຜ່ນ ຈາລຶກ ເຫລົ່າ ນີ້;
ເພາະວ່າເພິ່ນໄດ້ຮັບການ ສິດສອນມາໃນ
*ກ*ພາສາຂອງຊາວ ເອຢິບ ສະນັ້ນເພິ່ນຈຶ່ງ
ອ່ານຕົວອັກສອນເຫລົ່ານັ້ນໄດ້ ແລະ ສິດ
ສອນລູກຂອງເພິ່ນ, ໂດຍວິທີນີ້ເຂົາເຈົ້າຈຶ່ງ
ຈະສິດສອນລູກຫລານຂອງເຂົາເຈົ້າໄດ້,
ແລະ ສະນັ້ນມັນຈຶ່ງເຮັດໃຫ້ພຣະບັນຍັດ
ຂອງພຣະເຈົ້າສຳເລັດ, ຈົນກະທັ້ງລົງມາ
ເຖິງປະຈຸບັນນີ້.
5 ລູກເອີຍ ພໍ່ກ່າວກັບພວກເຈົ້າວ່າ ຖ້າ
ສິ່ງເຫລົ່ານີ້ບໍ່ໄດ້ຖືກ *ກ*ຮັກສາໄວ້ໂດຍພຣະ
ຫັດຂອງພຣະເຈົ້າ, ເພື່ອພວກເຮົາຈະໄດ້
*ຂ*ອ່ານ ແລະ ເຂົ້າໃຈ *ຄ*ຄວາມລຶກລັບຂອງ
ພຣະອົງ, ແລະ ມີພຣະບັນຍັດຂອງພຣະ
ອົງຢູ່ຕໍ່ໜ້າຂອງພວກເຮົາຢູ່ສະເໝີແລ້ວ,
ເຖິງແມ່ນວ່າບັນພະບຸລຸດຂອງພວກເຮົາຈະ
ເສື່ອມໂຊມລົງຢູ່ໃນຄວາມບໍ່ເຊື່ອຖື ແລະ
ພວກເຮົາກໍຈະເປັນຄືກັນກັບຊາວເລມັນ
ພີ່ນ້ອງຂອງພວກເຮົາຜູ້ບໍ່ຮູ້ຈັກຫຍັງໝົດ
ກ່ຽວກັບເລື່ອງເຫລົ່ານີ້, ຫລື ກໍບໍ່ເຊື່ອເລື່ອງ
ເຫລົ່ານີ້ເລີຍເມື່ອພວກເຂົາໄດ້ຮັບການສິດ
ສອນ, ເພາະວ່າ *ງ*ຮີດຄອງປະເພນີຂອງບັນ
ພະບຸລຸດຂອງພວກເຂົານັ້ນບໍ່ຖືກຕ້ອງ.
6 ໂອ້ ລູກເອີຍ, ພໍ່ຢາກໃຫ້ລູກຈື່ຈຳໄວ້
ວ່າ ຄຳເຫລົ່ານີ້ເປັນຄວາມຈິງ ແລະ ບັນທຶກ
ເຫລົ່ານີ້ກໍເປັນ *ກ*ຄວາມຈິງຄືກັນ. ແລະ ຈົ່ງ
ເບິ່ງ, ແຜ່ນຈາລຶກຂອງນີໄຟກໍຄືກັນ, ຊຶ່ງມີ
ບັນທຶກ ແລະ ຄຳກ່າວໄວ້ຈາກບັນພະບຸລຸດ
ຂອງພວກເຮົານັບຕັ້ງແຕ່ເວລາທີ່ເຂົາເຈົ້າ
ໜີອອກຈາກເຢຣູຊາເລັມມາຈົນເຖິງປະຈຸ
ບັນນີ້, ແລະ ເລື່ອງເຫລົ່ານີ້ເປັນຄວາມຈິງ;
ແລະ ພວກເຮົາສາມາດຮູ້ຈັກເຖິງຄວາມແນ່
ນອນນີ້ໄດ້ເພາະວ່າພວກເຮົາມີມັນຢູ່ຕໍ່ໜ້າ
ພວກເຮົາ.
7 ແລະ ບັດນີ້ລູກເອີຍ, ພໍ່ຢາກໃຫ້ລູກຈື່
ຈຳໄວ້ເພື່ອຈະ *ກ*ຄົ້ນຄວ້າຫາມັນຢ່າງພາກ
ພຽນເພື່ອລູກຈະໄດ້ຮັບຜົນປະໂຫຍດຈາກ
ມັນ; ແລະ ພໍ່ຢາກໃຫ້ລູກ *ຂ*ຮັກສາພຣະບັນ
ຍັດຂອງພຣະເຈົ້າ, ເພື່ອລູກຈະໄດ້ *ຄ*ຮຸ່ງ
ເຮືອງຢູ່ໃນແຜ່ນດິນນີ້ຕາມ *ງ*ຄຳສັນຍາ ຊຶ່ງ
ພຣະຜູ້ເປັນເຈົ້າໄດ້ກະທຳໄວ້ກັບບັນພະບຸ
ລຸດຂອງພວກເຮົາ.
8 ແລະ ກະສັດເບັນຢາມິນໄດ້ສິດສອນ
ພວກລູກຊາຍຂອງເພິ່ນອີກຫລາຍເລື່ອງ,
ຊຶ່ງບໍ່ໄດ້ຂຽນໄວ້ໃນໜັງສືເຫລັ້ມນີ້.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກກະສັດເບັນຢາມິນສິດສອນລູກຂອງ
ເພິ່ນຈົບແລ້ວ, ເພິ່ນໄດ້ເຖົ້າແກ່ລົງ, ແລະ
ເພິ່ນເຫັນວ່າໃນບໍ່ຊ້ານີ້ ເພິ່ນຈະຕ້ອງເປັນ
ໄປຕາມທາງຂອງມວນໂລກທັງປວງແລ້ວ;
ສະນັ້ນ, ເພິ່ນຈຶ່ງຄິດວ່າ ມັນເຖິງເວລາແລ້ວ
ທີ່ຈະມອບລາຊາອານາຈັກໃຫ້ແກ່ລູກຄົນ
ໃດຄົນໜຶ່ງຂອງເພິ່ນ.
10 ສະນັ້ນ, ເພິ່ນຈຶ່ງໄດ້ໃຫ້ໂມໄຊຢາມາ
ຢູ່ຕໍ່ໜ້າເພິ່ນ; ແລະ ນີ້ຄືຂໍ້ຄວາມທີ່ເພິ່ນ
ໄດ້ເວົ້າກັບລາວ, ມີຄວາມວ່າ: ພໍ່ຢາກໃຫ້
ລູກປະກາດໄປທົ່ວແຜ່ນດິນຕໍ່ບັນດາຜູ້
ຄົນພວກນີ້ທັງໝົດ, ຫລື *ກ*ຜູ້ຄົນຂອງເຊຣາ
ເຮັມລາ, ແລະ ຜູ້ຄົນຂອງໂມໄຊຢາຜູ້ອາ
ໄສຢູ່ໃນແຜ່ນດິນ, ເພື່ອພວກເຂົາຈະໄດ້ມາ
ເຕົ້າໂຮມກັນ ເພາະວ່າໃນມື້ອື່ນພໍ່ຈະປະ
ກາດຕໍ່ຜູ້ຄົນຂອງພໍ່ອອກຈາກປາກຂອງພໍ່

4*ກ* ຈສ—ປ 1:64.
5*ກ* ຄມພ ພຣະຄຳພີ—ພຣະ ຄຳພີທີ່ຕ້ອງຮັກສາໄວ້.
*ຂ* ພບຍ 6:6–8.
*ຄ* ຄມພ ຄວາມລຶກລັບ ຂອງພຣະເຈົ້າ.
*ງ* ມຊຢ 10:11–17.
6*ກ* 1 ນຟ 1:3; 2 ນຟ 33:10–11; ມຣນ 10:27.
7*ກ* ຄມພ ພຣະຄຳພີ.
*ຂ* ມຊຢ 2:22; ແອວ 50:20–22.
*ຄ* ພສສ 122:6; 1 ນຟ 2:20.
*ງ* ແອວ 9:12–14.
10*ກ* ອມນ 1:14.

ເອງວ່າລູກເປັນ [ຂ]ກະສັດ ແລະ ເປັນຜູ້ປົກ
ຄອງດູແລຜູ້ຄົນພວກນີ້, ຊຶ່ງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຮົາປະທານ
ໃຫ້ພວກເຮົາ.
11 ແລະ ຍິ່ງໄປກວ່ານັ້ນ, ພໍ່ຈະຕັ້ງ [ກ]ຊື່ໃຫ້
ແກ່ຜູ້ຄົນພວກນີ້, ເພື່ອພວກເຂົາຈະໄດ້ດີ
ເດັ່ນກວ່າຜູ້ຄົນທັງປວງ ເພາະວ່າອົງພຣະຜູ້
ເປັນເຈົ້າໄດ້ນຳພາພວກເຂົາອອກມາຈາກ
ແຜ່ນດິນເຢຣູຊາເລັມ ແລະ ພໍ່ຈະເຮັດແນວ
ນີ້ ເພາະວ່າພວກເຂົາເປັນຄົນພາກພຽນໃນ
ການຮັກສາພຣະບັນຍັດຂອງພຣະຜູ້ເປັນ
ເຈົ້າ.
12 ແລະ ພໍ່ຈະຕັ້ງຊື່ໃຫ້ແກ່ພວກເຂົາ
ແລະ ຊື່ນັ້ນຈະບໍ່ຖືກລຶບເລີຍ, ນອກຈາກຈະ
ເປັນ [ກ]ການລ່ວງລະເມີດເທົ່ານັ້ນ.
13 ແທ້ຈິງແລ້ວ, ແລະ ຍິ່ງໄປກວ່ານັ້ນ,
ພໍ່ກ່າວກັບລູກວ່າ, ຖ້າຫາກຄົນພວກນີ້ ຊຶ່ງ
ພຣະຜູ້ເປັນເຈົ້າໂປດປານທີ່ສຸດຈະຕົກໄປ
ສູ່ [ກ]ການລ່ວງລະເມີດ, ແລະ ກັບກາຍເປັນ
ຄົນຊົ່ວ ແລະ ຄົນຫລິ້ນຊູ້, ພຣະຜູ້ເປັນເຈົ້າ
ຈະປ່ອຍປະພວກເຂົາ ແລະ ພວກເຂົາຈະ
ເປັນຄົນ [ຂ]ອ່ອນແອຄືກັນກັບພີ່ນ້ອງຂອງ
ພວກເຂົາ; ແລະ ພຣະອົງຈະບໍ່ [ຄ]ປົກປ້ອງ
ພວກເຂົາໂດຍອຳນາດອັນຫາທີ່ທຽບບໍ່ໄດ້
ແລະ ໜ້າອັດສະຈັນຂອງພຣະອົງຕໍ່ໄປດັ່ງ
ທີ່ພຣະອົງໄດ້ປົກປ້ອງບັນພະບຸລຸດຂອງ
ພວກເຮົາມາແຕ່ກ່ອນ.
14 ເພາະພໍ່ກ່າວກັບລູກວ່າ, ຖ້າຫາກ
ພຣະອົງບໍ່ໄດ້ເດ່ພຣະຫັດອອກມາເພື່ອຮັກ
ສາບັນພະບຸລຸດຂອງພວກເຮົາແລ້ວທຸກໆ
ຄົນຕ້ອງຕົກຢູ່ໃນກຳມືຂອງຊາວເລມັນ,
ແລະ ຈະກັບກາຍເປັນຜູ້ເຄາະຮ້າຍຍ້ອນ
ຄວາມກຽດຊັງຂອງພວກເຂົາ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກກະສັດເບັນຢາມິນກ່າວຂໍ້ຄວາມ
ເຫລົ່ານີ້ກັບລູກຊາຍຂອງເພິ່ນຈົບແລ້ວ, ຄື
ເພິ່ນໄດ້ມອບໝາຍການງານທັງໝົດຂອງ
ອານາຈັກໃຫ້ແກ່ລາວ.
16 ແລະ ຍິ່ງໄປກວ່ານັ້ນ, ເພິ່ນຍັງໄດ້
ມອບໝາຍບັນທຶກ ຊຶ່ງຢູ່ໃນ [ກ]ແຜ່ນຈາລຶກ
ທອງເຫລືອງໃຫ້ແກ່ລາວອີກ; ແລະ ແຜ່ນ
ຈາລຶກຂອງນີໄຟ; ແລະ [ຂ]ດາບຂອງລາບານ
ແລະ [ຄ]ລູກກົມ ຫລື ເຂັມຊີ້ທິດ ຊຶ່ງໄດ້ນຳພາ
ບັນພະບຸລຸດຂອງພວກເຮົາໄປໃນຖິ່ນແຫ້ງ
ແລ້ງກັນດານ ຊຶ່ງສິ່ງເຫລົ່ານີ້ໄດ້ຖືກຕຽມໄວ້
ໂດຍພຣະຫັດຂອງພຣະຜູ້ເປັນເຈົ້າ ເພື່ອ
ນຳພາເຂົາເຈົ້າອອກໄປຕາມຄວາມເອົາໃຈ
ໃສ່ ແລະ ຄວາມພາກພຽນທີ່ເຂົາເຈົ້າໄດ້
ຖວາຍແດ່ພຣະອົງ.
17 ສະນັ້ນ, ເນື່ອງຈາກວ່າພວກເຂົາບໍ່ຊື່
ສັດ ພວກເຂົາຈຶ່ງບໍ່ຈະເລີນຮຸ່ງເຮືອງ ຫລື
ກ້າວໜ້າໃນການເດີນທາງ, ແຕ່ຖືກ [ກ]ໄລ່
ກັບຄືນ, ແລະ ເຮັດໃຫ້ພຣະເຈົ້າບໍ່ພໍພຣະ
ໄທກັບພວກເຂົາ; ແລະ ສະນັ້ນ ພວກເຂົາ
ຈຶ່ງຖືກລົງໂທດດ້ວຍຄວາມອຶດຢາກ ແລະ
ຄວາມທຸກຢ່າງແສນສາຫັດ, ເພື່ອເຮັດໃຫ້
ສຳນຶກເຖິງໜ້າທີ່ຂອງພວກເຂົາ.
18 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ຄື ໂມໄຊຢາໄດ້ອອກໄປຕາມທີ່ບິດາຂອງ
ລາວສັ່ງ, ແລະ ປະກາດຕໍ່ຜູ້ຄົນທັງໝົດໃນ
ແຜ່ນດິນເຊຣາເຮັມລາ ເພື່ອໃຫ້ພວກເຂົາ
ມາເຕົ້າໂຮມກັນເພື່ອຂຶ້ນໄປຫາພຣະວິຫານ
ເພື່ອຟັງຂໍ້ຄວາມຊຶ່ງບິດາຂອງລາວຈະກ່າວ
ກັບພວກເຂົາ.

10 *ຂ* ມຊຢ 2:30.
11 *ກ* ມຊຢ 5:8–12.
12 *ກ* ຄມພ ບາບ.
13 *ກ* ຮຣ 6:4–6.
*ຂ* ຣລມ 4:24–26.
*ຄ* ຄພ 103:8–10.
16 *ກ* ມຊຢ 1:3.
*ຂ* 1 ນຟ 4:8–19;
ຄມ 1:13;
ຄພ 17:1.
*ຄ* 1 ນຟ 16:10.
17 *ກ* 1 ນຟ 18:12–13.

## ບົດທີ 2

*ກະສັດເບັນຢາມິນກ່າວຕໍ່ຜູ້ຄົນຂອງເພິ່ນ—ເພິ່ນໄດ້ກ່າວເຖິງຄວາມສະເໝີພາບ, ຄວາມຍຸດຕິທຳ, ຄວາມຊອບທຳຂອງການປົກຄອງ—ເພິ່ນແນະນຳພວກເຂົາໃຫ້ຮັບໃຊ້ກະສັດແຫ່ງສະຫວັນ—ຜູ້ທີ່ກະບົດຕໍ່ພຣະເຈົ້າຈະທົນກັບຄວາມເຈັບປວດເໝືອນດັ່ງໄຟທີ່ບໍ່ຮູ້ມອດ. ປະມານ 124 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກໂມໄຊຢາກະທຳຕາມທີ່ບິດາຂອງລາວໄດ້ສັ່ງລາວແລ້ວ, ແລະ ອອກໄປປະກາດຕະຫລອດທົ່ວແຜ່ນດິນ, ເພື່ອຜູ້ຄົນຈະໄດ້ເຕົ້າໂຮມກັນຕະຫລອດທົ່ວແຜ່ນດິນ, ເພື່ອພວກເຂົາຈະໄດ້ຂຶ້ນໄປຫາພຣະວິຫານເພື່ອຟັງຄຳຊຶ່ງກະສັດເບັນຢາມິນຈະກ່າວກັບພວກເຂົາ.

2 ແລະ ມັນມີຄົນເປັນຈຳນວນຫລາຍ, ຫລາຍຈົນວ່ານັບບໍ່ຖ້ວນ; ຊຶ່ງພວກເຂົາໄດ້ເພີ່ມຫລາຍຂຶ້ນຈົນເຕັມແຜ່ນດິນ.

3 ແລະ ພວກເຂົາໄດ້ເອົາລູກສັດ [ກ]ໂຕທຳອິດຂອງພວກເຂົາມານຳອີກ, ເພື່ອຈະໄດ້ຖວາຍ [ຂ]ເຄື່ອງບູຊາ ແລະ [ຄ]ເຄື່ອງເຜົາ [ງ]ຕາມກົດຂອງໂມເຊ;

4 ແລະ ເພື່ອຈະໄດ້ຖວາຍຄວາມຂອບພຣະໄທແດ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົານຳອີກ, ຜູ້ໄດ້ນຳພວກເຂົາອອກຈາກແຜ່ນດິນເຢຣູຊາເລັມ, ແລະ ຜູ້ໄດ້ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ, ແລະ ໄດ້ [ກ]ແຕ່ງຕັ້ງຄົນທ່ຽງທຳໃຫ້ເປັນ [ຂ]ຜູ້ສອນຂອງພວກເຂົາ, ແລະ ຄົນຊອບທຳຄົນໜຶ່ງໃຫ້ເປັນກະສັດຂອງພວກເຂົາອີກ, ຜູ້ສະຖາປະນາສັນຕິສຸກຂຶ້ນໃນ [ຄ]ແຜ່ນດິນເຊຣາເຮັມລາ, ແລະ ຜູ້ສອນໃຫ້ພວກເຂົາ [ງ]ຮັກສາພຣະບັນຍັດຂອງພຣະເຈົ້າ, ເພື່ອພວກເຂົາຈະໄດ້ປິຕິຍິນດີ ແລະ ເຕັມໄປດ້ວຍ [ຈ]ຄວາມຮັກຕໍ່ພຣະເຈົ້າ ແລະ ມະນຸດທັງປວງ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກເຂົາຂຶ້ນມາຮອດພຣະວິຫານແລ້ວ, ພວກເຂົາໄດ້ຕັ້ງຜ້າເຕັ້ນຂອງພວກເຂົາຂຶ້ນ, ທຸກຄົນຢູ່ນຳ [ກ]ຄອບຄົວຂອງຕົນ, ຊຶ່ງມີເມຍຂອງຕົນ, ແລະ ລູກຊາຍຂອງຕົນ ແລະ ລູກສາວຂອງຕົນ, ແລະ ລູກຊາຍຂອງພວກເຂົາ, ແລະ ລູກສາວຂອງພວກເຂົາ, ນັບຕັ້ງແຕ່ລູກກົກຈົນເຖິງລູກຫລ້າ, ແຕ່ລະຄອບຄົວແຍກຍ້າຍກັນຢູ່.

6 ແລະ ພວກເຂົາໄດ້ຕັ້ງຜ້າເຕັ້ນຂອງຕົນອ້ອມຮອບພຣະວິຫານ, ທຸກຄົນຕັ້ງ [ກ]ຜ້າເຕັ້ນຂອງຕົນໃຫ້ປະຕູຫັນໄປຫາພຣະວິຫານເພື່ອວ່າພວກເຂົາຈະໄດ້ຢູ່ໃນຜ້າເຕັ້ນຂອງຕົນເອງ ແລະ ຟັງຂໍ້ຄວາມທີ່ກະສັດເບັນຢາມິນຈະເວົ້າກັບພວກເຂົາ;

7 ເພາະຝູງຊົນນັ້ນມີຈຳນວນຢ່າງຫລວງຫລາຍຈົນວ່າກະສັດເບັນຢາມິນບໍ່ສາມາດສິດສອນພວກເຂົາທັງໝົດໄດ້ໃນເຂດກຳແພງພຣະວິຫານ, ສະນັ້ນ ເພິ່ນຈຶ່ງໃຫ້ສ້າງຫໍສູງຂຶ້ນບ່ອນໜຶ່ງເພື່ອຜູ້ຄົນຂອງເພິ່ນຈະໄດ້ຍິນຂໍ້ຄວາມທີ່ເພິ່ນກ່າວກັບພວກເຂົາ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນເລີ່ມເວົ້າກັບຜູ້ຄົນຂອງເພິ່ນຈາກຫໍສູງ;

---

**2** 3*ກ* ປຖກ 4:4.
*ຂ* ຄມພ ເສຍສະລະ, ການເສຍສະລະ.
*ຄ* 1 ນຟ 5:9.
*ງ* 2 ນຟ 25:24; ແອວ 30:3; 34:13–14.
4*ກ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
*ຂ* ມຊຢ 18:18–22. ຄມພ ສອນ, ຜູ້ສອນ, ຄູສອນ.
*ຄ* ອມນ 1:12–15.
*ງ* ຢຣ 15:10.
*ຈ* ຄມພ ຮັກ, ຄວາມຮັກ.
5*ກ* ຄມພ ຄອບຄົວ.
6*ກ* ອພຍ 33:8–10.

ແລະ ບາງຄົນບໍ່ສາມາດໄດ້ຍິນຂໍ້ຄວາມ
ຂອງເພິ່ນເພາະຄວາມຫລວງຫລາຍຂອງ
ຝູງຊົນ; ສະນັ້ນ ເພິ່ນຈຶ່ງໃຫ້ຂຽນຂໍ້ຄວາມທີ່
ເພິ່ນເວົ້າໄວ້ ແລະ ສົ່ງອອກໄປໃຫ້ບັນດາ
ຜູ້ທີ່ບໍ່ໄດ້ຍິນສຽງຂອງເພິ່ນ, ເພື່ອພວກເຂົາ
ຈະໄດ້ຮັບຂໍ້ຄວາມຂອງເພິ່ນຄືກັນ.
9 ແລະ ນີ້ຄືຂໍ້ຄວາມທີ່ເພິ່ນ [ກ]ເວົ້າ ແລະ
ໄດ້ຂຽນໄວ້, ມີຄວາມວ່າ: ພີ່ນ້ອງຂອງຂ້າ
ພະເຈົ້າ, ທ່ານທັງຫລາຍທີ່ມາຊຸມນຸມກັນ,
ພວກທ່ານຈະໄດ້ຍິນຂໍ້ຄວາມຂອງຂ້າພະ
ເຈົ້າໄດ້ ຊຶ່ງຂ້າພະເຈົ້າຈະເວົ້າກັບພວກ
ທ່ານໃນມື້ນີ້ ເພາະຂ້າພະເຈົ້າບໍ່ໄດ້ສັ່ງໃຫ້
ພວກທ່ານຂຶ້ນມາບ່ອນນີ້ເພື່ອ [ຂ]ການມ່ວນ
ຊື່ນກັບຂໍ້ຄວາມທີ່ຂ້າພະເຈົ້າຈະເວົ້າ, ແຕ່
ເພື່ອພວກທ່ານຈະ [ຄ]ເຊື່ອຟັງຂ້າພະເຈົ້າ
ແລະ ເປີດຫູຂອງພວກທ່ານ ເພື່ອພວກ
ທ່ານຈະໄດ້ຍິນ, ແລະ ເປີດ [ງ]ໃຈຂອງພວກ
ທ່ານເພື່ອພວກທ່ານຈະເຂົ້າໃຈ, ແລະ ເປີດ
[ຈ]ຈິດໃຈຂອງພວກທ່ານເພື່ອ [ສ]ຄວາມລຶກ
ລັບຂອງພຣະເຈົ້າຈະເປີດເຜີຍອອກຕໍ່ສາຍ
ຕາຂອງພວກທ່ານ.
10 ຂ້າພະເຈົ້າບໍ່ໄດ້ສັ່ງໃຫ້ພວກທ່ານຂຶ້ນ
ມາບ່ອນນີ້ເພື່ອພວກທ່ານຈະ [ກ]ຢ້ານກົວຂ້າ
ພະເຈົ້າ, ຫລື ເພື່ອພວກທ່ານຈະຄິດວ່າ ຕົວ
ຂ້າພະເຈົ້າເອງຍິ່ງໃຫຍ່ກວ່າມະນຸດ.
11 ແຕ່ຂ້າພະເຈົ້າກໍຄືກັນກັບຕົວຂອງ
ພວກທ່ານທີ່ຕ້ອງຂຶ້ນຢູ່ກັບຈຸດອ່ອນທຸກ
ຢ່າງໃນຮ່າງກາຍ ແລະ ຈິດໃຈ; ເຖິງຢ່າງ
ໃດກໍຕາມ ຂ້າພະເຈົ້າກໍໄດ້ຖືກເລືອກຈາກ
ຜູ້ຄົນພວກນີ້, ແລະ ຮັບການແຕ່ງຕັ້ງຈາກ
ບິດາຂອງຂ້າພະເຈົ້າ, ແລະ ໄດ້ຮັບການ
ອະນຸຍາດຈາກພຣະຫັດຂອງພຣະຜູ້ເປັນ
ເຈົ້າ ເພື່ອໃຫ້ຂ້າພະເຈົ້າເປັນກະສັດ ແລະ
ຜູ້ປົກຄອງ ເໜືອຜູ້ຄົນພວກນີ້; ແລະ ໄດ້ຮັບ
ການຮັກສາ ແລະ ປົກປ້ອງໂດຍອຳນາດ
ອັນຫາທີ່ປຽບບໍ່ໄດ້ຂອງພຣະອົງ, ທີ່ໃຫ້ຮັບ
ໃຊ້ພຣະອົງດ້ວຍສຸດພະລັງ, ຄວາມນຶກ
ຄິດ, ແລະ ກຳລັງ ຊຶ່ງພຣະຜູ້ເປັນເຈົ້າໄດ້
ປະທານໃຫ້ແກ່ຂ້າພະເຈົ້າ.
12 ຂ້າພະເຈົ້າກ່າວກັບພວກທ່ານວ່າ
ເໝືອນດັ່ງທີ່ຂ້າພະເຈົ້າໄດ້ຮັບອະນຸຍາດ
ໃຫ້ໃຊ້ອັນເວລາຂອງຂ້າພະເຈົ້າໃນການ
ຮັບໃຊ້ພວກທ່ານ, ຈົນເຖິງເວລານີ້, ແລະ ບໍ່
ໄດ້ສະແຫວງຫາ [ກ]ຄຳ ຫລື ເງິນ ຫລື ຂອງມີ
ຄ່າຢ່າງໃດຈາກພວກທ່ານເລີຍ;
13 ທັງຂ້າພະເຈົ້າບໍ່ຍອມໃຫ້ພວກທ່ານ
ຕ້ອງຖືກຄຸມຂັງຢູ່ໃນຄຸກມືດ ຫລື ປ່ອຍໃຫ້
ພວກທ່ານເປັນຂ້ອຍຂ້າຂອງກັນແລະກັນ,
ຫລື ໃຫ້ພວກທ່ານຂ້າ, ຫລື ປຸ້ນສະດົມ,
ຫລື ລັກມັກສົກ, ຫລື ຫລິ້ນຊູ້; ຫລື ໃຫ້ພວກ
ທ່ານເຮັດຄວາມຊົ່ວຮ້າຍໃດໆ, ແລະ ໄດ້
ສິດສອນພວກທ່ານໃຫ້ຮັກສາພຣະບັນຍັດ
ຂອງພຣະຜູ້ເປັນເຈົ້າ ໃນທຸກສິ່ງທີ່ພຣະອົງ
ບັນຊາພວກທ່ານ—
14 ແມ່ນແຕ່ຕົວ ຂ້າພະເຈົ້າກໍຍັງໄດ້
[ກ]ເຮັດວຽກດ້ວຍມືຂອງຂ້າພະເຈົ້າເອງເພື່ອ
ຈະໄດ້ຮັບໃຊ້ພວກທ່ານ, ແລະ ເພື່ອພວກ
ທ່ານຈະບໍ່ຕ້ອງແບກພາລະການເສຍພາສີ,
ແລະ ເພື່ອຈະບໍ່ມີສິ່ງໃດເກີດກັບພວກທ່ານ
ຊຶ່ງເປັນພາລະເຫລືອທີ່ຈະທົນໄດ້—ແລະ
ຈາກເລື່ອງທັງໝົດຊຶ່ງຂ້າພະເຈົ້າເວົ້າມານີ້,
ທ່ານທຸກຄົນເປັນພະຍານຢູ່ໃນມື້ນີ້.

9 ກ ມຊຢ 8:3.
ຂ ຄພ 6:12.
ຄ ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
ງ ມຊຢ 12:27; 3 ນຟ 19:33.
ຈ ຄມພ ຈິດໃຈ.
ສ ຄມພ ຄວາມລຶກລັບຂອງພຣະເຈົ້າ.
10 ກ ຄມພ ຢ້ານກົວ, ຄວາມຢ້ານກົວ.
12 ກ ກຈກ 20:33–34.
14 ກ 1 ກຣທ 9:18.

15 ເຖິງຢ່າງໃດກໍຕາມ, ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າກໍບໍ່ໄດ້ເຮັດສິ່ງເຫລົ່ານີ້ໄປເພື່ອອວດອ້າງ ທັງຂ້າພະເຈົ້າບໍ່ໄດ້ບອກເລື່ອງເຫລົ່ານີ້ເພື່ອກ່າວໂທດພວກທ່ານ; ແຕ່ຂ້າພະເຈົ້າບອກພວກທ່ານເຖິງເລື່ອງເຫລົ່ານີ້ ເພື່ອພວກທ່ານຈະໄດ້ຮູ້ວ່າ ຂ້າພະເຈົ້າມີ [ກ]ຈິດສຳນຶກອັນໃສສະອາດຕໍ່ພຣະພັກຂອງພຣະເຈົ້າໃນມື້ນີ້.

16 ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ເພາະຂ້າພະເຈົ້າໄດ້ໃຊ້ວັນເວລາຂອງຂ້າພະເຈົ້າໄປໃນການຮັບໃຊ້ພວກທ່ານ, ຂ້າພະເຈົ້າຈຶ່ງບໍ່ປາດຖະໜາຈະອວດອ້າງ ເພາະຂ້າພະເຈົ້າຢູ່ໃນການຮັບໃຊ້ພຣະເຈົ້ານັ້ນເອງ.

17 ແລະ ຈົ່ງເບິ່ງ, ຂ້າພະເຈົ້າບອກພວກທ່ານເຖິງເລື່ອງເຫລົ່ານີ້ເພື່ອພວກທ່ານຈະຮຽນຮູ້ກ່ຽວກັບ [ກ]ປັນຍາ ເພື່ອພວກທ່ານຈະຮຽນຮູ້ວ່າ ເມື່ອພວກທ່ານ [ຂ]ຮັບໃຊ້ [ຄ]ເພື່ອນມະນຸດດ້ວຍກັນ ພວກທ່ານກໍຮັບໃຊ້ພຣະເຈົ້າຂອງພວກທ່ານນັ້ນເອງ.

18 ຈົ່ງເບິ່ງ, ພວກທ່ານເອີ້ນຂ້າພະເຈົ້າວ່າກະສັດຂອງພວກທ່ານ; ແລະ ຖ້າຂ້າພະເຈົ້າ, ຜູ້ທີ່ພວກທ່ານເອີ້ນວ່າກະສັດຂອງພວກທ່ານ ໄດ້ທຳງານ ເພື່ອຮັບໃຊ້ພວກທ່ານ, ແລ້ວພວກທ່ານຈະບໍ່ທຳງານເພື່ອ [ກ]ຮັບໃຊ້ຊຶ່ງກັນແລະກັນບໍ?

19 ແລະ ຈົ່ງເບິ່ງອີກ, ຖ້າຫາກຂ້າພະເຈົ້າຜູ້ທີ່ພວກທ່ານເອີ້ນວ່າກະສັດຂອງພວກທ່ານ ຜູ້ທີ່ໃຊ້ວັນເວລາຂອງເພິ່ນໃນການຮັບໃຊ້ພວກທ່ານ, ແລະ ຍັງຢູ່ໃນການຮັບໃຊ້ພຣະເຈົ້າ ສົມຄວນແລ້ວທີ່ຈະໄດ້ຮັບຄຸນຄວາມດີຈາກພວກທ່ານ, ໂອ້ ພວກທ່ານຄວນຈະ [ກ]ຂອບພຣະໄທກະສັດແຫ່ງສະຫວັນຂອງພວກທ່ານຫລາຍປານໃດນໍ!

20 ຂ້າພະເຈົ້າຂໍກ່າວກັບທ່ານທັງຫລາຍພີ່ນ້ອງຂອງຂ້າພະເຈົ້າວ່າ ຖ້າຫາກພວກທ່ານຈະຖວາຍຄວາມຂອບພຣະໄທ ແລະ [ກ]ສັນລະເສີນທັງໝົດ ຊຶ່ງທັງຈິດວິນຍານຂອງພວກທ່ານມີອຳນາດເປັນເຈົ້າຂອງແດ່ [ຂ]ພຣະເຈົ້າຜູ້ໄດ້ສ້າງພວກທ່ານ, ແລະຮັກສາ, ແລະ ປົກປ້ອງພວກທ່ານມາແລ້ວ, ແລະ ເຮັດໃຫ້ພວກທ່ານປິຕິຍິນດີ ແລະເຮັດໃຫ້ພວກທ່ານຢູ່ນຳກັນດ້ວຍສັນຕິສຸກ—

21 ຂ້າພະເຈົ້າຂໍກ່າວກັບພວກທ່ານວ່າ ຖ້າຫາກພວກທ່ານຈະຮັບໃຊ້ພຣະອົງຜູ້ໄດ້ສ້າງພວກທ່ານມາຕັ້ງແຕ່ຕົ້ນ, ແລະປົກປ້ອງພວກທ່ານແຕ່ລະມື້ໂດຍໃຫ້ພວກທ່ານຢືມລົມຫາຍໃຈ ເພື່ອພວກທ່ານຈະມີຊີວິດ ແລະ ເຄື່ອນໄຫວ ແລະ ເຮັດຕາມ [ກ]ຈຸດປະສົງຂອງພວກທ່ານເອງ, ແລະ ຄ້ຳຊູພວກທ່ານແຕ່ລະມື້—ຂ້າພະເຈົ້າເວົ້າວ່າຖ້າຫາກພວກທ່ານຮັບໃຊ້ພຣະອົງດ້ວຍສຸດຈິດວິນຍານຂອງພວກທ່ານ ແຕ່ພວກທ່ານກໍຍັງຄົງເປັນຜູ້ຮັບໃຊ້ທີ່ [ຂ]ບໍ່ສົມຄ່າຢູ່.

22 ແລະ ຈົ່ງເບິ່ງ, ທັງໝົດທີ່ພຣະອົງຕ້ອງການຈາກພວກທ່ານຄື ໃຫ້ [ກ]ຮັກສາ [ຂ]ພຣະບັນຍັດຂອງພຣະອົງ ແລະ ພຣະອົງສັນຍາກັບພວກທ່ານວ່າ ຖ້າຫາກພວກທ່ານຈະຮັກສາພຣະບັນຍັດຂອງພຣະອົງ ພວກ

15 *ກ* ຄມພ ສຳນຶກ, ຄວາມສຳນຶກ.
17 *ກ* ຄມພ ສະຕິປັນຍາ.
*ຂ* ມທ 25:40; ຢກບ 1:27; ຄພ 42:29–31. ຄມພ ຮັບໃຊ້, ການຮັບໃຊ້.
*ຄ* ຄມພ ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ; ເອື້ອຍນ້ອງ.
18 *ກ* ມທ 20:26–27.
19 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
20 *ກ* 1 ນຟ 18:16.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
21 *ກ* ຄມພ ອຳເພີໃຈ.
*ຂ* ລກ 17:7–10.
22 *ກ* ລລວ 25:18–19; 2 ນຟ 1:9.
*ຂ* ຄມພ ພຣະບັນຍັດຂອງພຣະເຈົ້າ.

ທ່ານ ຈະ ຮຸ່ງ ເຮືອງ ຢູ່ ໃນ ແຜ່ນ ດິນ ນີ້; ແລະ
ພຣະ ອົງບໍ່ ເຄີຍ [ຄ]ປ່ຽນ ແປງ ໄປ ຈາກ ສິ່ງທີ່
ພຣະອົງຮັບ ສັ່ງໄວ້; ສະນັ້ນ, ຖ້າຫາກພວກ
ທ່ານ ຈະ [ງ]ຮັກ ສາພຣະ ບັນ ຍັດ ຂອງ ພຣະ
ອົງ, ພຣະອົງຈະປະທານພອນໃຫ້ແກ່ພວກ
ທ່ານ ແລະ ເຮັດໃຫ້ພວກທ່ານຮຸ່ງເຮືອງ.
23 ແລະ ບັດນີ້ປະການທຳອິດຄື ພຣະອົງ
ໄດ້ສ້າງພວກທ່ານມາ, ແລະ ໄດ້ປະທານ
ຊີວິດໃຫ້ແກ່ພວກທ່ານ, ຍ້ອນເຫດນີ້ພວກ
ທ່ານຈຶ່ງເປັນໜີ້ພຣະອົງ.
24 ແລະ ປະການທີສອງຄື ພຣະອົງຕ້ອງ
ການໃຫ້ພວກທ່ານກະທຳຕາມທີ່ພຣະອົງ
ບັນຊາພວກທ່ານໄວ້; ຖ້າຫາກພວກທ່ານ
ເຮັດຕາມນີ້, ພຣະອົງຈະປະທານ [ກ]ພອນ
ໃຫ້ພວກທ່ານ ໂດຍທັນທີ. ແລະ ສະນັ້ນ
ພຣະອົງຈະຈ່າຍຄ່າຈ້າງໃຫ້ແກ່ພວກທ່ານ,
ແລ້ວພວກທ່ານກໍຍັງຄົງເປັນໜີ້ພຣະອົງຢູ່
ໃນຕອນນີ້ ແລະ ຕະຫລອດໄປບໍ່ມີວັນສິ້ນ
ສຸດ; ສະນັ້ນ, ພວກທ່ານຈະອວດອ້າງໄປ
ເຮັດຫຍັງ?
25 ແລະ ບັດ ນີ້ ຂ້າ ພະ ເຈົ້າ ຂໍ ຖາມ ວ່າ
ພວກທ່ານສາມາດເວົ້າກ່ຽວກັບຕົວເອງໄດ້
ບໍ? ຂ້າພະເຈົ້າຂໍຕອບພວກທ່ານວ່າ, ບໍ່ໄດ້.
ພວກທ່ານບໍ່ສາມາດເວົ້າວ່າ ພວກທ່ານມີ
ຄ່າເທົ່າກັບຂີ້ຝຸ່ນ; ເຖິງແມ່ນວ່າພວກທ່ານ
ຖືກ [ກ]ສ້າງມາຈາກ [ຂ]ຂີ້ຝຸ່ນກໍຕາມ; ເພາະ
ຈົ່ງເບິ່ງ, ມັນເປັນຂອງພຣະອົງຜູ້ສ້າງພວກ
ທ່ານມາ.
26 ແລະ ຂ້າພະເຈົ້າເຖິງແມ່ນວ່າຂ້າພະ
ເຈົ້ານີ້, ຜູ້ທີ່ພວກທ່ານເອີ້ນວ່າກະສັດຂອງ
ພວກທ່ານກໍບໍ່ດີໄປກວ່າຕົວ ຂອງ ພວກ
ທ່ານເລີຍ; ເພາະຂ້າພະເຈົ້າມາຈາກຂີ້ຝຸ່ນ
ເໝືອນກັນ. ແລະ ພວກທ່ານເຫັນວ່າຂ້າພະ
ເຈົ້າເຖົ້າແກ່, ແລະ ຮ່າງກາຍທີ່ເປັນມະຕະ
ນີ້ກຳລັງຈະຖືກສົ່ງຄືນໃຫ້ແກ່ແຜ່ນດິນທີ່ໃຫ້
ກຳເນີດມັນມາ.
27 ສະນັ້ນ, ເໝືອນດັ່ງທີ່ຂ້າພະເຈົ້າໄດ້
ເວົ້າກັບພວກທ່ານມາແລ້ວ, ຂ້າພະເຈົ້າໄດ້
ຮັບໃຊ້ພວກທ່ານໂດຍ [ກ]ເດີນໄປດ້ວຍຈິດ
ສຳນຶກອັນໃສສະອາດຕໍ່ພຣະພັກຂອງພຣະ
ເຈົ້າ, ເປັນຍ້ອນແນວນີ້ແລ້ວທີ່ຂ້າພະເຈົ້າ
ໄດ້ໃຫ້ພວກທ່ານມາຊຸມນຸມກັນຢູ່ໃນເວລາ
ນີ້ ກໍເພື່ອຈະໄດ້ເຫັນວ່າຂ້າພະເຈົ້າຈະບໍ່
ມີຂໍ້ຕຳນິ, ແລະ ເພື່ອ [ຂ]ເລືອດຂອງພວກ
ທ່ານຈະບໍ່ມາຕິດຢູ່ນຳຂ້າພະເຈົ້າເມື່ອຂ້າ
ພະເຈົ້າຢືນຢູ່ເພື່ອຮັບການພິພາກສາຂອງ
ພຣະເຈົ້າໃນເລື່ອງທີ່ພຣະອົງບັນຊາຂ້າພະ
ເຈົ້າໄວ້ກ່ຽວກັບພວກທ່ານ.
28 ຂ້າພະເຈົ້າເວົ້າກັບພວກທ່ານອີກວ່າ
ຂ້າພະເຈົ້າໄດ້ໃຫ້ພວກທ່ານມາຊຸມນຸມກັນ
ເພື່ອຂ້າພະເຈົ້າຈະໄດ້ [ກ]ກຳຈັດເລືອດຂອງ
ພວກທ່ານອອກຈາກອາພອນຂອງຂ້າພະ
ເຈົ້າໃນໄລຍະເວລານີ້ ຕອນທີ່ຂ້າພະເຈົ້າ
ກຳລັງຈະລົງໄປຫາຫລຸມຝັງສົບຂອງຂ້າ
ພະເຈົ້າ ເພື່ອຂ້າພະເຈົ້າຈະໄດ້ລົງໄປດ້ວຍ
ສັນຕິສຸກ, ແລະ [ຂ]ວິນຍານທີ່ເປັນອະມະຕະ
ຂອງຂ້າພະເຈົ້າຈະໄດ້ເຂົ້າຮ່ວມກັບ [ຄ]ຜູ້ທີ່
ຮ້ອງເພງຢູ່ເບື້ອງເທິງເພື່ອສັນລະເສີນພຣະ
ເຈົ້າຜູ້ທ່ຽງທຳ.
29 ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າເວົ້າ
ກັບພວກທ່ານອີກວ່າ ຂ້າພະເຈົ້າໃຫ້ພວກ
ທ່ານມາຊຸມນຸມກັນນີ້ ເພື່ອຂ້າພະເຈົ້າຈະ
ໄດ້ປະກາດແກ່ພວກທ່ານວ່າ, ຂ້າພະເຈົ້າ
ຈະບໍ່ໄດ້ເປັນຜູ້ສອນ ຫລື ເປັນກະສັດຂອງ

22 *ຄ* ຄພ 3:1–2.
*ງ* ຄພ 14:7; 58:2–3.
24 *ກ* ຄມພ ພອນ, ໃຫ້ພອນ, ເປັນພອນ.
25 *ກ* ຄມພ ສ້າງ, ການສ້າງ.
*ຂ* ປຖກ 3:19; ຢຄ 2:21.
27 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ຂ* ຢຄ 1:19.
28 *ກ* ຢຄ 2:2.
*ຂ* ຄມພ ວິນຍານ.
*ຄ* ມມ 7:7.

ພວກທ່ານຕໍ່ໄປອີກແລ້ວ;
30 ເພາະ ແມ່ນ ແຕ່ຕອນ ນີ້ຮ່າງກາຍ ທັງ
ໝົດ ຂອງ ຂ້າ ພະ ເຈົ້າ ກໍ ສັ່ນ ສາຍ ຢ່າງ ຍິ່ງ
ຂະນະ ທີ່ ຂ້າ ພະ ເຈົ້າ ພະ ຍາ ຍາມ ເວົ້າ ກັບ
ພວກທ່ານ; ແຕ່ອົງພຣະຜູ້ເປັນເຈົ້າຍັງຄ້ຳ
ຊູຂ້າພະເຈົ້າໄວ້, ແລະ ຍອມໃຫ້ຂ້າພະເຈົ້າ
ເວົ້າກັບພວກທ່ານ, ແລະ ບັນຊາຂ້າພະ
ເຈົ້າໃຫ້ປະກາດແກ່ພວກທ່ານໃນມື້ນີ້ວ່າ
ໂມໄຊຢາລູກຊາຍຂອງຂ້າພະເຈົ້າຈະເປັນ
ກະສັດ ແລະ ເປັນຜູ້ປົກຄອງດູແລພວກ
ທ່ານ.
31 ແລະ ບັດ ນີ້ ພີ່ ນ້ອງ ຂອງ ຂ້າ ພະ ເຈົ້າ,
ຂ້າ ພະ ເຈົ້າ ຢາກ ໃຫ້ ພວກ ທ່ານ ເຮັດ ດັ່ງ ທີ່
ພວກ ທ່ານ ໄດ້ ເຮັດ ມາ ເໝືອນ ແຕ່ ກ່ອນ.
ພວກ ທ່ານ ໄດ້ ຮັກ ສາ ບັນ ຍັດ ຂອງ ຂ້າ ພະ
ເຈົ້າ, ແລະ ບັນຍັດຂອງບິດາຂອງຂ້າພະ
ເຈົ້າ, ແລະ ໄດ້ຮຸ່ງເຮືອງມາ, ແລະ ໄດ້ຮັບ
ການຮັກສາບໍ່ໃຫ້ຕົກຢູ່ໃນກຳມືຂອງສັດຕູ
ຂອງພວກທ່ານ, ຖ້າຫາກພວກທ່ານຈະຮັກ
ສາບັນຍັດຂອງລູກຊາຍ ຂອງຂ້າພະ ເຈົ້າ
ຫລື ພຣະບັນຍັດຂອງພຣະເຈົ້າ ຊຶ່ງພວກ
ທ່ານຈະ ໄດ້ຮັບ ຈາກລາວ, ພວກທ່ານ ຈະ
ມີຄວາມຮຸ່ງເຮືອງຢູ່ໃນ ແຜ່ນດິນນີ້, ແລະ
ສັດຕູຂອງພວກທ່ານຈະບໍ່ມີອຳນາດ ເໜືອ
ກວ່າພວກທ່ານເລີຍ.
32 ແຕ່, ໂອ້ ຜູ້ຄົນຂອງຂ້າພະເຈົ້າ, ຈົ່ງ
ລະວັງ ເພາະຢ້ານວ່າມັນຈະເກີດມີ [ກ]ການ
ຂັດແຍ້ງກັນຂຶ້ນໃນບັນດາພວກທ່ານ, ແລະ
ພວກທ່ານ ຈົ່ງຢ່າສູ່ໄດ້ ເລືອກ ເຊື່ອຟັງວິນ
ຍານ ຊົ່ວ, ຊຶ່ງ ໂມ ໄຊຢາບິດາຂອງຂ້າພະ
ເຈົ້າໄດ້ເວົ້າເຖິງ.
33 ເພາະ ຈົ່ງ ເບິ່ງ, ມີ ວິບັດ ຢ່າງ ໜຶ່ງ ຊຶ່ງ
ກຳນົດໃຫ້ເກີດກັບຄົນທີ່ເລືອກເຊື່ອຟັງວິນ
ຍານນັ້ນ; ເພາະຖ້າຫາກເຂົາເລືອກເຊື່ອຟັງ
ມັນ, ແລະ ຄົງຢູ່ໃນຄວາມຊົ່ວຮ້າຍ, ແລະ
ຕາຍໃນບາບຂອງເຂົາແລ້ວ ຜູ້ນັ້ນຍ່ອມດື່ມ
[ກ]ຄວາມອັບປະໂຫຍດເຂົ້າໄປໃນຈິດວິນ
ຍານຂອງເຂົາເອງ; ເພາະວ່າເຂົາຕ້ອງໄດ້
ຮັບໂທດ [ຂ]ອັນເປັນນິດທີ່ເປັນຄ່າຈ້າງຂອງ
ເຂົາໂດຍການລ່ວງລະເມີດກົດຂອງພຣະ
ເຈົ້າອັນເປັນການກົງກັນຂ້າມກັບຄວາມຮູ້
ຂອງເຂົາເອງ.
34 ຂ້າພະເຈົ້າກ່າວກັບພວກທ່ານອີກວ່າ
ບໍ່ມີໃຜເລີຍໃນບັນດາພວກທ່ານນອກຈາກ
ເດັກນ້ອຍໆຂອງພວກທ່ານທີ່ບໍ່ໄດ້ຮັບການ
ສິດສອນກ່ຽວກັບເລື່ອງເຫລົ່ານີ້ ທີ່ບໍ່ຮູ້ຈັກ
ວ່າພວກທ່ານເປັນໜີ້ມາຕະຫລອດການ
ຕໍ່ພຣະບິດາເທິງສະຫວັນຂອງພວກທ່ານ
ທີ່ຈະຖວາຍທຸກສິ່ງທີ່ພວກທ່ານມີຢູ່ ແລະ
ເປັນຢູ່ໃຫ້ແກ່ພຣະອົງ, ແລະ ໄດ້ຮັບການ
ສິດສອນກ່ຽວກັບບັນທຶກ ຊຶ່ງມີການທຳ
ນາຍທີ່ສາດສະດາບໍລິສຸດໄດ້ເວົ້າໄວ້ ຈົນ
ເຖິງເວລາທີ່ລີໄຮ ບັນພະບຸລຸດຂອງພວກ
ເຮົາໄດ້ຈາກເຢຣູຊາເລັມມາ;
35 ແລະ ທຸກ ສິ່ງ ທີ່ໄດ້ບອກຕະຫລອດ
ມານັບຕັ້ງແຕ່ບັນພະບຸລຸດຂອງພວກເຮົາ
ຈົນເຖິງເວລານີ້ນຳອີກ. ແລະ ຈົ່ງເບິ່ງ, ຄົນ
ເຫລົ່ານັ້ນໄດ້ເວົ້າເຖິງສິ່ງທີ່ພຣະຜູ້ເປັນເຈົ້າ
ບັນຊາພວກເພິ່ນນຳອີກ; ສະນັ້ນ, ມັນຈຶ່ງ
ເປັນສິ່ງຊອບທຳ ແລະ ເປັນຄວາມຈິງ.
36 ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າເວົ້າກັບພວກທ່ານວ່າ ຫລັງຈາກ
ພວກທ່ານຮູ້ ແລະ ໄດ້ຮັບການສິດສອນໃນ
ເລື່ອງທັງໝົດນີ້ແລ້ວ, ຖ້າຫາກພວກທ່ານ
ຍັງຈະລ່ວງລະເມີດ ແລະ ເຮັດກົງກັນຂ້າມ
ກັບສິ່ງທີ່ໄດ້ເວົ້າໄວ້, ພວກທ່ານຖອນຕົວ

32 *ກ* 3 ນຟ 11:29–30.
33 *ກ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
*ຂ* ຄພ 19:6, 10–12.

ອອກ ໄປ ຈາກ ພຣະ ວິນ ຍານ ຂອງ ພຣະ ຜູ້
ເປັນ ເຈົ້າ, ຈົນວ່າມັນບໍ່ມີບ່ອນໃດເລີຍໃນ
ພວກທ່ານ ທີ່ຈະສາມາດນຳພວກທ່ານໄປ
ໃນທາງແຫ່ງປັນຍາເພື່ອພວກທ່ານຈະໄດ້
ຮັບພອນ, ຈະເລີນຮຸ່ງເຮືອງ, ແລະ ຮັບການ
ປົກປັກຮັກສາ—
37 ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ຜູ້
ໃດທີ່ກະທຳແບບນີ້, ຜູ້ນັ້ນຍ່ອມອອກມາ
ໃນ [ກ]ການກະບົດຕໍ່ພຣະເຈົ້າຢ່າງເປີດເຜີຍ;
ສະນັ້ນ, ເຂົາຈຶ່ງເລືອກເຊື່ອຟັງວິນຍານຊົ່ວ
ແລະ ກັບເປັນສັດຕູຕໍ່ຄວາມຊອບທຳທັງ
ໝົດ; ສະນັ້ນ, ພຣະຜູ້ເປັນເຈົ້າຈຶ່ງບໍ່ມີບ່ອນ
ຢູ່ໃນຕົວເຂົາ, ເພາະພຣະອົງຈະບໍ່ສະຖິດຢູ່
ໃນວິຫານທີ່ [ຂ]ບໍ່ບໍລິສຸດ.
38 ສະນັ້ນ ຖ້າຫາກຄົນນັ້ນບໍ່ [ກ]ກັບໃຈ
ແລະ ຄົງຢູ່ ແລະ ຕາຍໂດຍເປັນສັດຕູກັບ
ພຣະເຈົ້າ, ແລ້ວ [ຂ]ຄວາມຍຸດຕິທຳແຫ່ງ
ສະຫວັນຈະປຸກຈິດວິນຍານອັນເປັນອະ
ມະຕະຂອງເຂົາໃຫ້ຕື່ນຂຶ້ນມາຫາຄວາມຮູ້
ສຶກໃນ [ຄ]ຄວາມຜິດທີ່ຮຸນແຮງຂອງຕົນເອງ,
ຊຶ່ງເຮັດໃຫ້ເຂົາຖອຍອອກໄປຈາກທີ່ປະ
ທັບຂອງພຣະຜູ້ເປັນເຈົ້າ, ແລະ ເຮັດໃຫ້
ອົກຂອງເຂົາເຕັມໄປດ້ວຍຄວາມຮູ້ສຶກຜິດ,
ແລະ ຄວາມເຈັບປວດ, ແລະ ຄວາມທຸກທໍ
ລະມານ, ຊຶ່ງປຽບເໝືອນດັ່ງໄຟທີ່ບໍ່ຮູ້ມອດ,
ຊຶ່ງແປວໄຟນັ້ນລອຍຂຶ້ນຢູ່ຕະຫລອດການ
ແລະ ຕະຫລອດໄປ.
39 ແລະ ບັດນີ້ຂ້າພະເຈົ້າເວົ້າກັບພວກ
ທ່ານວ່າ ຜູ້ນັ້ນຈະບໍ່ໄດ້ຮັບ [ກ]ຄວາມເມດຕາ
ເລີຍ; ສະນັ້ນຊາຕາກຳໃນວາລະສຸດທ້າຍ
ຂອງເຂົາຄື ຄວາມທຸກທໍລະມານທີ່ບໍ່ມີວັນ
ສິ້ນສຸດ.
40 ໂອ້, ພວກ ທ່ານ ຜູ້ ມີ ອາ ຍຸ ສູງ ທັງ
ຫລາຍ, ແລະ ພວກເຈົ້າຜູ້ໜຸ່ມແໜ້ນ, ແລະ
ພວກເຈົ້າຜູ້ເປັນເດັກນ້ອຍໆ ຜູ້ທີ່ສາມາດ
ເຂົ້າໃຈຂໍ້ຄວາມຂອງຂ້າພະເຈົ້າ, ເພາະຂ້າ
ພະເຈົ້າໄດ້ເວົ້າຢ່າງແຈ່ມແຈ້ງເພື່ອພວກ
ທ່ານຈະໄດ້ເຂົ້າໃຈ, ຂ້າພະເຈົ້າໄດ້ອະ
ທິຖານແທນພວກທ່ານ ເພື່ອພວກທ່ານ
ຈະໄດ້ຕື່ນຂຶ້ນມາຫາ [ກ]ຄວາມຊົງຈຳເຖິງ
ສະພາບອັນເປັນຕາຢ້ານຂອງຄົນທີ່ຕົກຢູ່
ໃນການລ່ວງລະເມີດ.
41 ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າ
ປາດຖະໜາໃຫ້ພວກທ່ານພິຈາລະນາເຖິງ
ສະພາບອັນເປັນພອນ ແລະ [ກ]ຄວາມສຸກ
ຂອງຄົນທີ່ຮັກສາພຣະບັນຍັດຂອງພຣະ
ເຈົ້າ. ເພາະຈົ່ງເບິ່ງ, ເຂົາໄດ້ [ຂ]ຮັບພອນ
ທຸກຢ່າງ ທັງຝ່າຍໂລກ ແລະ ຝ່າຍວິນ
ຍານ; ແລະ ຖ້າຫາກເຂົາອົດທົນຢ່າງ [ຄ]ຊື່
ສັດຈົນເຖິງທີ່ສຸດແລ້ວ, ເຂົາຈະຖືກຮັບເຂົ້າ
ສູ່ [ງ]ສະຫວັນ, ແລ້ວເຂົາຈະໄດ້ຢູ່ກັບພຣະ
ເຈົ້າໃນສະພາບແຫ່ງຄວາມສຸກທີ່ບໍ່ມີວັນ
ສິ້ນສຸດ. ໂອ້ ຈົ່ງຈື່ຈຳ, ຈົ່ງຈື່ຈຳໄວ້ວ່າ ເລື່ອງ
ເຫລົ່ານີ້ເປັນຄວາມຈິງ; ເພາະອົງພຣະຜູ້
ເປັນເຈົ້າໄດ້ກ່າວໄວ້.

## ບົດທີ 3

*ຄຳປາໄສຂອງກະສັດເບັນຢາມິນຕໍ່—ພຣະ
ຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່ ຈະ*

37 *ກ* ມຊຢ 3:12; ຣລມ 8:24–25. ຄມພ ກະບົດ, ການກະບົດ.
*ຂ* ແອວ 7:21.
38 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຄ* ຄມພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
39 *ກ* ແອວ 34:8–9, 15–16. ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
40 *ກ* ແອວ 5:18.
41 *ກ* 4 ນຟ 1:15–18. ຄມພ ຊື່ນຊົມ, ຄວາມຊື່ນຊົມ.
*ຂ* ຄມພ ພອນ, ໃຫ້ພອນ, ເປັນພອນ.
*ຄ* ຄພ 6:13.
*ງ* ຄມພ ສະຫວັນ.

*ປະຕິບັດຢູ່ໃນບັນດາປວງຊົນ—ໂລຫິດຈະ ໄຫລ ອອກມາ ຈາກ ທຸກຂຸມຂົນ ໃນຂະນະ ທີ່ພຣະອົງຊົດ ໃຊ້ແທນບາບ ຂອງ ໂລກ— ພຣະນາມຂອງພຣະອົງ ເທົ່ານັ້ນທີ່ຈະນຳ ຄວາມລອດມາ ໄດ້—ມະນຸດສາມາດປະ ຖິ້ມມະນຸດທີ່ມີຈິດໃຈທຳມະດາ ແລ້ວກາຍ ມາເປັນ ໄພ່ພົນຂອງພຣະ ເຈົ້າ ໂດຍຜ່ານ ການຊົດ ໃຊ້—ຄວາມທໍລະມານຂອງຄົນ ຊົ່ວ ຈະ ເປັນ ເໝືອນ ດັ່ງ ທະເລ ໄຟ ແລະ ມາດ. ປະມານ 124 ປີ ກ່ອນ ຄ.ສ.*

1 ແລະ ອີກຢ່າງໜຶ່ງພີ່ນ້ອງຂອງຂ້າພະ ເຈົ້າ, ຂ້າພະເຈົ້າຢາກໃຫ້ພວກທ່ານຕັ້ງໃຈ ຟັງ, ເພາະວ່າຂ້າພະເຈົ້າຍັງມີສິ່ງທີ່ຈະກ່າວ ກັບພວກທ່ານອີກ; ເພາະຈົ່ງເບິ່ງ, ຂ້າພະ ເຈົ້າມີເລື່ອງຈະບອກພວກທ່ານກ່ຽວກັບສິ່ງ ທີ່ຈະມາເຖິງ.

2 ແລະ ເລື່ອງທີ່ຂ້າພະເຈົ້າຈະບອກພວກ ທ່ານ ນັ້ນ ແມ່ນ ກ່ຽວກັບ [ກ]ທູດອົງໜຶ່ງ ຊຶ່ງ ຈາກພຣະເຈົ້າມາ ແລະ ເຮັດໃຫ້ຂ້າພະເຈົ້າ ຮູ້ຈັກ. ແລະ ເພິ່ນໄດ້ກ່າວກັບຂ້າພະເຈົ້າ ວ່າ: ຈົ່ງຕື່ນເຖີດ, ແລະ ຂ້າພະເຈົ້າໄດ້ຕື່ນ ຂຶ້ນ, ແລະ ຈົ່ງເບິ່ງ ເພິ່ນໄດ້ຢືນຢູ່ຕໍ່ໜ້າຂ້າ ພະເຈົ້າ.

3 ແລະ ເພິ່ນໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງຕື່ນເຖີດ, ແລະ ຈົ່ງຟັງຄຳທີ່ຂ້າພະເຈົ້າ ຈະບອກທ່ານ; ເພາະຈົ່ງເບິ່ງ, ຂ້າພະເຈົ້າ ມາເພື່ອປະກາດຂ່າວ [ກ]ອັນໜ້າຊື່ນຊົມແຫ່ງ ຄວາມສຸກອັນຍິ່ງໃຫຍ່ຕໍ່ທ່ານ.

4 ເພາະພຣະຜູ້ເປັນເຈົ້າໄດ້ຍິນຄຳອະ ທິຖານຂອງທ່ານແລ້ວ, ແລະ ໄດ້ພິຈາລະ ນາຄວາມຊອບທຳຂອງທ່ານ, ແລະ ໄດ້ສັ່ງ ຂ້າພະເຈົ້າໃຫ້ມາເພື່ອປະກາດກັບທ່ານວ່າ ທ່ານຈົ່ງປິຕິຍິນດີເຖີດ; ແລະ ວ່າໃຫ້ທ່ານ ປະກາດກັບຜູ້ຄົນຂອງທ່ານເພື່ອພວກເຂົາ ຈະເຕັມໄປດ້ວຍຄວາມສຸກເຊັ່ນດຽວກັນ.

5 ເພາະຈົ່ງເບິ່ງ, ເວລາຈະມາເຖິງ, ແລະ ຍັງອີກບໍ່ດົນ, ຊຶ່ງພ້ອມດ້ວຍອຳນາດຂອງ [ກ]ພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງ ໃຫຍ່, ຜູ້ຄອບຄອງ, ຜູ້ເປັນມາແລ້ວ ແລະ ເປັນຢູ່ຈາກຊົ່ວນິລັນດອນເຖິງຊົ່ວນິລັນ ດອນ ຈະສະເດັດຈາກສະຫວັນລົງມາຢູ່ ໃນບັນດາລູກຫລານມະນຸດ, ແລະ ຈະຢູ່ ໃນ [ຂ]ຮ່າງກາຍທີ່ເຮັດດ້ວຍດິນໜຽວ, ແລະ ຈະສະເດັດອອກໄປໃນບັນດາມະນຸດ ແລະ ເຮັດ [ຄ]ສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນ ປິ່ນປົວຄົນເຈັບປ່ວຍ, ເຮັດໃຫ້ຄົນຕາຍຄືນ ມີຊີວິດ, ເຮັດໃຫ້ຄົນເປ້ຍລ່ອຍຍ່າງໄດ້, ຄົນ ຕາບອດເຫັນຮຸ່ງ, ແລະ ຄົນຫູໜວກໄດ້ຍິນ, ແລະ ປິ່ນປົວພະຍາດທຸກຢ່າງ.

6 ແລະ ພຣະອົງຈະຂັບໄລ່ [ກ]ຜີປີສາດ ຫລື ວິນຍານຊົ່ວທີ່ຢູ່ໃນໃຈຂອງລູກຫລານ ມະນຸດໃຫ້ອອກໄປ.

7 ແລະ ແລ້ວພຣະອົງຈະອົດທົນຕໍ່ [ກ]ການ ລໍ້ລວງ, ແລະ ຄວາມເຈັບປວດທາງຮ່າງ ກາຍ, ແລະ ອົດທົນຕໍ່ຄວາມ [ຂ]ຫິວເຂົ້າ, ຄວາມກະຫາຍນ້ຳ, ແລະ ຄວາມອິດເມື່ອຍ ຫລາຍກວ່າມະນຸດຈະ [ຄ]ທົນ ໄດ້, ນອກ ຈາກຈະເຖິງແກ່ຄວາມຕາຍ; ເພາະຈົ່ງເບິ່ງ, [ງ]ຄວາມເຈັບປວດຂອງພຣະອົງຈະໃຫຍ່ ຫລວງທີ່ສຸດຈົນ [ຈ]ໂລຫິດໄຫລອອກຈາກ ທຸກຂຸມຂົນ, ເພາະຄວາມຊົ່ວຮ້າຍ ແລະ

**3** 2ກ ຄມພ ທູດ, ເທວະດາ.
3ກ ລກ 2:10–11.
5ກ ຄມພ ເຢໂຮວາ.
ຂ ມຊຢ 7:27; ແອວ 7:9–13.
ຄ ມທ 4:23–24; ກຈກ 2:22; 1 ນຟ 11:31. ຄມພ ມະຫັດສະຈັນ, ການມະຫັດສະຈັນ.
6ກ ມຣກ 1:32–34.
7ກ ຄມພ ລໍ້ລວງ, ການລໍ້ລວງ.
ຂ ມທ 4:1–2.
ຄ ຄພ 19:15–18.
ງ ອຊຢ 53:4–5.
ຈ ລກ 22:44.

ຄວາມໜ້າກຽດຊັງຂອງຜູ້ຄົນຂອງພຣະອົງ.
8 ແລະ ພຣະອົງຈະໄດ້ຮັບພຣະນາມວ່າ
[ກ]ພຣະເຢຊູຄຣິດ, [ຂ]ພຣະບຸດຂອງພຣະເຈົ້າ,
[ຄ]ພຣະບິດາແຫ່ງສະຫວັນ ແລະ ແຜ່ນດິນ
ໂລກ, ພຣະຜູ້ສ້າງທຸກສິ່ງຕັ້ງແຕ່ຕົ້ນ; ແລະ
[ງ]ມານດາຂອງພຣະອົງຈະມີຊື່ວ່າ [ຈ]ມາຣີ.
9 ແລະ ແລ້ວພຣະອົງຈະສະເດັດໄປ
ຫາຜູ້ຄົນຂອງພຣະອົງເພື່ອ [ກ]ຄວາມລອດ
ຈະໄດ້ມາເຖິງລູກຫລານມະນຸດ ເຖິງແມ່ນ
ໂດຍທາງ [ຂ]ສັດທາໃນພຣະນາມຂອງພຣະ
ອົງ; ແລະ ເຖິງແມ່ນຫລັງຈາກທັງໝົດນີ້
ແລ້ວ ພວກເຂົາກໍຈະຖືວ່າ ພຣະອົງເປັນ
ມະນຸດທຳມະດາຜູ້ໜຶ່ງ, ແລະ ກ່າວວ່າມີ [ຄ]ຜີ
ສິງຢູ່ໃນພຣະອົງ, ແລະ ຈະ [ງ]ຂ້ຽນຕີພຣະ
ອົງ, ແລະ ຈະ [ຈ]ຄຶງພຣະອົງໄວ້ເທິງໄມ້ກາງ
ແຂນ.
10 ແລະ ໃນມື້ [ກ]ທີສາມພຣະອົງຈະ [ຂ]ລຸກ
ຂຶ້ນຈາກຄວາມຕາຍ; ແລະ ຈົ່ງເບິ່ງ, ພຣະ
ອົງຈະປະທັບຢືນຢູ່ເພື່ອ [ຄ]ພິພາກສາໂລກ;
ແລະ ຈົ່ງເບິ່ງ, ເລື່ອງທັງໝົດນີ້ຈະເປັນໄປ
ເພື່ອການພິພາກສາອັນຊອບທຳຈະໄດ້ມາ
ເຖິງລູກຫລານມະນຸດ.
11 ເພາະ ຈົ່ງເບິ່ງ, ແລະ [ກ]ໂລຫິດຂອງ
ພຣະອົງຈະ [ຂ]ຊົດໃຊ້ແທນບາບຂອງຄົນ
ທີ່ [ຄ]ຕົກໄປຍ້ອນການລ່ວງລະເມີດຂອງ
ອາດາມນຳອີກ, ຜູ້ທີ່ຕາຍໂດຍບໍ່ຮູ້ຈັກພຣະ
ປະສົງຂອງພຣະເຈົ້າກ່ຽວກັບພວກເຂົາ,
ຫລື ຜູ້ທີ່ເຮັດບາບ [ງ]ໂດຍບໍ່ຮູ້.
12 ແຕ່ວິບັດ, ວິບັດແກ່ຜູ້ທີ່ຮູ້ວ່າຕົນ [ກ]ກະ
ບົດຕໍ່ພຣະເຈົ້າ! ເພາະຄວາມລອດຈະບໍ່ມາ
ຫາຄົນແນວນັ້ນ ນອກຈາກຈະເປັນໂດຍ
ທາງການກັບໃຈ ແລະ ມີສັດທາໃນ [ຂ]ອົງ
ພຣະເຢຊູຄຣິດເຈົ້າເທົ່ານັ້ນ.
13 ແລະ ອົງພຣະຜູ້ເປັນເຈົ້າໄດ້ສົ່ງສາດ
ສະດາຜູ້ບໍລິສຸດຂອງພຣະອົງມາໃນບັນດາ
ລູກຫລານມະນຸດທັງປວງ ເພື່ອປະກາດ
ເລື່ອງເຫລົ່ານີ້ກັບທຸກຕະກຸນ, ທຸກປະຊາ
ຊາດ, ທຸກພາສາ, ຍ້ອນເຫດນີ້ຜູ້ໃດກໍຕາມ
ທີ່ເຊື່ອວ່າ ພຣະຄຣິດຈະສະເດັດມາ, ຜູ້ນັ້ນ
ຈະໄດ້ຮັບ [ກ]ການປົດບາບຂອງພວກເຂົາ,
ແລະ ປິຕິຍິນດີດ້ວຍຄວາມຊື່ນຊົມຢ່າງຍິ່ງ,
ແມ່ນແຕ່ [ຂ]ຄືກັບວ່າພຣະອົງໄດ້ສະເດັດມາ
ໃນບັນດາພວກເຂົາແລ້ວ.
14 ແຕ່ອົງພຣະຜູ້ເປັນເຈົ້າກໍຍັງເຫັນວ່າ
ຜູ້ຄົນຂອງພຣະອົງເປັນຄົນແຂງຄໍ, ແລະ
ພຣະອົງໄດ້ກຳນົດກົດໄວ້ໃຫ້ພວກເຂົາ,
ແມ່ນແຕ່ [ກ]ກົດຂອງໂມເຊ.
15 ແລະ ເຄື່ອງໝາຍ, ແລະ ການແປກ
ປະຫລາດ, ແລະ [ກ]ແບບຢ່າງ, ແລະ ເງົາ
ຫລາຍຢ່າງທີ່ພຣະອົງໄດ້ສະແດງແກ່ພວກ

8 ກ ຄມພ ພຣະເຈົ້າ, ຝ່າຍ ພຣະເຈົ້າ—ພຣະເຈົ້າ ອົງເປັນພຣະບຸດ.
ຂ ແອວ 7:10.
ຄ ຣລມ 14:12; 3 ນຟ 9:15.
ງ ມທ 1:16; 1 ນຟ 11:14–21.
ຈ ຄມພ ມາຣີ, ມານດາ ຂອງພຣະເຢຊູ.
9 ກ ຄມພ ລອດ, ຄວາມລອດ.
ຂ ຄມພ ສັດທາ.
ຄ ຢຮ 8:48.
ງ ມຣກ 15:15.
ຈ ລກ 18:33; 1 ນຟ 19:10; 2 ນຟ 10:3. ຄມພ ຄຶງ, ການຄຶງ.
10 ກ ມທ 16:21; 2 ນຟ 25:13; ຣລມ 14:20–27.
ຂ ຄມພ ການຟື້ນຄືນພຣະ ຊົນ, ການຟື້ນຄືນຊີວິດ.
ຄ ຄມພ ພິພາກສາ, ການພິ ພາກສາ, ຜູ້ພິພາກສາ.
11 ກ ຄມພ ເລືອດ, ໂລຫິດ.
ຂ ຄມພ ຊົດໃຊ້, ການຊົດໃຊ້.
ຄ ຄມພ ການຕົກຂອງ ອາດາມ ແລະ ເອວາ.
ງ 2 ນຟ 9:25–26.
12 ກ ມຊຢ 2:36–38; ຣລມ 8:25. ຄມພ ກະບົດ, ການກະບົດ.
ຂ ຄມພ ພຣະຜູ້ເປັນເຈົ້າ.
13 ກ ຄມພ ປົດບາບ, ການປົດບາບ.
ຂ 2 ນຟ 25:24–27; ຈຣ 1:11.
14 ກ ຄມພ ກົດຂອງໂມເຊ.
15 ກ ຄມພ ພຣະເຢຊູຄຣິດ— ຮູບແບບ ຫລື ເຄື່ອງ ໝາຍເຖິງພຣະຄຣິດ.

ເຂົາກ່ຽວກັບການສະເດັດມາຂອງພຣະອົງ;
ແລະ ສາດສະດາຜູ້ບໍລິສຸດຈະເວົ້າກັບພວກ
ເຂົາກ່ຽວກັບການສະເດັດມາຂອງພຣະອົງ
ນຳອີກ; ແຕ່ພວກເຂົາກໍເຮັດ ໃຈ ແຂງກະ
ດ້າງຢູ່ ແລະ ບໍ່ເຂົ້າໃຈວ່າ [ຂ]ກົດຂອງໂມເຊ
ບໍ່ມີຜົນອັນໃດເລີຍນອກຈາກຈະເປັນໂດຍ
ທາງການຊົດໃຊ້ດ້ວຍໂລຫິດຂອງພຣະອົງ
ເທົ່ານັ້ນ.

16 ແລະ ເຖິງແມ່ນຖ້າຫາກເປັນໄປວ່າ
[ກ]ເດັກນ້ອຍໆເຮັດບາບໄດ້ ພວກເຂົາຈະ
ລອດບໍ່ໄດ້; ແຕ່ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ພວກເຂົາໄດ້ [ຂ]ຮັບພອນແລ້ວ;
ເພາະຈົ່ງເບິ່ງ, ເໝືອນດັ່ງເຊັ່ນໃນອາດາມ
ໂດຍທຳມະຊາດເຂົາຕົກ, ເຖິງແມ່ນເປັນ
ເຊັ່ນນັ້ນ ໂລຫິດຂອງພຣະຄຣິດກໍຊົດໃຊ້
ແທນບາບຂອງພວກເຂົາ.

17 ແລະ ຍິ່ງກວ່ານັ້ນ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ຈະ [ກ]ບໍ່ມີນາມອື່ນໃດໃຫ້
ໄວ້ ຫລື ທາງອື່ນໃດ ຫລື ວິທີໃດທີ່ [ຂ]ຄວາມ
ລອດຈະມາຫາລູກຫລານມະນຸດໄດ້ ນອກ
ຈາກໃນ ແລະ ໂດຍພຣະນາມຂອງ [ຄ]ພຣະ
ຄຣິດພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງ
ໃຫຍ່.

18 ເພາະ ຈົ່ງ ເບິ່ງ, ພຣະ ອົງ ພິ ພາກ ສາ
ແລະ ການພິພາກສາຂອງພຣະອົງທ່ຽງ
ທຳກັບທຸກຄົນ; ແລະ ເດັກແດງທາລົກທີ່
ເສຍຊີວິດນັ້ນບໍ່ໄດ້ຕາຍເລີຍ; ມະນຸດຈະ
ກິນຄວາມອັບປະໂຫຍດເຂົ້າໄປໃນຈິດວິນ
ຍານຂອງຕົນ ຖ້າຫາກພວກເຂົາບໍ່ຖ່ອມ
ຕົວ ແລະ [ກ]ກາຍເປັນຄືກັນກັບເດັກນ້ອຍໆ,
ແລະ ເຊື່ອວ່າຄວາມລອດມີມາແລ້ວ ແລະ
ມີຢູ່ ແລະ ຈະມາເຖິງໃນ ແລະ ໂດຍໂລຫິດ
ທີ່ [ຂ]ຊົດໃຊ້ຂອງພຣະຄຣິດພຣະຜູ້ເປັນເຈົ້າ
ອົງຊົງລິດອຳນາດຍິ່ງໃຫຍ່.

19 ເພາະມະນຸດທີ່ມີ [ກ]ຈິດໃຈທຳມະດາ
ເປັນສັດຕູກັບພຣະເຈົ້າ, ແລະ ເປັນມາແລ້ວ
ຕັ້ງແຕ່ [ຂ]ການຕົກຂອງອາດາມ, ແລະ ຈະ
ເປັນໄປຕະຫລອດການ ແລະ ຕະຫລອດ
ໄປ, ເວັ້ນເສຍແຕ່ພວກເຂົາຈະ [ຄ]ຍອມຕໍ່
ການຊັກຈູງຂອງ [ງ]ພຣະວິນຍານສັກສິດ,
ແລະ ປະຖິ້ມມະນຸດທີ່ມີຈິດໃຈທຳມະດາ
ແລະ ກາຍມາເປັນ [ຈ]ໄພ່ພົນຂອງພຣະເຈົ້າ
ໂດຍການຊົດໃຊ້ຂອງອົງພຣະຄຣິດ, ແລະ
ກາຍເປັນຄືກັນກັບ [ສ]ເດັກນ້ອຍ, ບອກລອນ
ສອນງ່າຍ, ອ່ອນໂຍນ, ຖ່ອມຕົວ, ອົດທົນ,
ເຕັມໄປດ້ວຍຄວາມຮັກ, ເຕັມໃຈໃນທຸກສິ່ງ
ທີ່ພຣະຜູ້ເປັນເຈົ້າເຫັນສົມຄວນທີ່ຈະໃຫ້
ເກີດກັບພວກເຂົາ, ເໝືອນດັ່ງເດັກນ້ອຍ
ຍິນຍອມຕໍ່ບິດາຂອງຕົນ.

20 ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າເວົ້າ
ກັບພວກທ່ານວ່າ ເວລາຈະມາເຖິງເມື່ອ
[ກ]ຄວາມຮູ້ເລື່ອງຂອງພຣະຜູ້ຊ່ວຍໃຫ້ລອດ
ຈະແຜ່ໄປທົ່ວ [ຂ]ທຸກປະຊາຊາດ, ທຸກຕະ
ກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ.

21 ແລະ ຈົ່ງເບິ່ງ, ເມື່ອເວລານັ້ນມາເຖິງ
ຈະບໍ່ມີຜູ້ໃດເລີຍທີ່ [ກ]ບໍ່ມີຂໍ້ຕຳນິຕໍ່ພຣະພັກ

15 *ຂ* ມຊຢ 13:27–32.
16 *ກ* ຄມພ ເດັກ, ເດັກນ້ອຍ.
*ຂ* ມຣນ 8:8–9.
17 *ກ* ກຈກ 4:10–12; 2 ນຟ 31:21.
*ຂ* ຄມພ ລອດ, ຄວາມລອດ.
*ຄ* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
18 *ກ* ມທ 18:3.
*ຂ* ມຊຢ 4:2; ຣລມ 5:9.
19 *ກ* 1 ກຣທ 2:11–14; ມຊຢ 16:2–3. ຄມພ ມະນຸດທີ່ມີຈິດໃຈທຳມະດາ.
*ຂ* ຄມພ ການຕົກຂອງອາດາມ ແລະ ເອວາ.
*ຄ* 2 ຂຄ 30:8.
*ງ* ມຣນ 10:4–5. ຄມພ ພຣະວິນຍານບໍລິສຸດ.
*ຈ* ຄມພ ໄພ່ພົນຂອງພຣະເຈົ້າ.
*ສ* 3 ນຟ 9:22.
20 *ກ* ຄພ 3:16.
*ຂ* ຄມພ ວຽກງານເຜີຍແຜ່.
21 *ກ* ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.

ຂອງພຣະເຈົ້າ ນອກຈາກຈະເປັນດັ່ງເດັກ
ນ້ອຍໆ, ພຽງແຕ່ໂດຍການກັບໃຈ ແລະ ມີ
ສັດທາໃນພຣະນາມຂອງອົງພຣະຜູ້ເປັນ
ເຈົ້າອົງຊົງລິດອຳນາດຍິ່ງໃຫຍ່.
22 ແລະ ເຖິງແມ່ນໃນເວລານີ້ ເມື່ອພວກ
ທ່ານສິດສອນຜູ້ຄົນຂອງພວກທ່ານເຖິງສິ່ງ
ທີ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າໄດ້ບັນ
ຊາພວກທ່ານ, ຈົນຮອດເວລານັ້ນ ຈະພົບ
ວ່າ ພວກເຂົາບໍ່ມີຂໍ້ຕຳນິອີກຕໍ່ໄປ ໃນສາຍ
ພຣະເນດຂອງພຣະເຈົ້າ, ພຽງແຕ່ ຕາມຄຳ
ທີ່ຂ້າພະເຈົ້າໄດ້ກ່າວກັບພວກທ່ານເທົ່າ
ນັ້ນ.
23 ແລະ ບັດນີ້ ຂ້າພະເຈົ້າໄດ້ກ່າວຄຳ
ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ບັນຊາຂ້າພະເຈົ້າ
ແລ້ວ.
24 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້:
ຄຳເຫລົ່ານັ້ນຈະຢືນເປັນປະຈັກພະຍານທີ່
ແຈ່ມແຈ້ງຕໍ່ຜູ້ຄົນພວກນີ້ໃນວັນພິພາກສາ;
ຊຶ່ງແຕ່ລະຄົນຈະຖືກພິພາກສາຕາມຄຳ
ເຫລົ່ານັ້ນ ຕາມວຽກງານຂອງພວກເຂົາ, ບໍ່
ວ່າດີ ຫລື ຊົ່ວ.
25 ແລະ ຖ້າ ຫາກ ພວກ ເຂົາ ຊົ່ວ ພວກ
ເຂົາຈະຖືກສົ່ງໄປຫາ [ກ]ຄວາມຫລັງອັນເປັນ
ຕາຢ້ານກ່ຽວກັບຄວາມຜິດ ແລະ ຄວາມ
ໜ້າກຽດຊັງຂອງພວກເຂົາ ຊຶ່ງເຮັດໃຫ້
ພວກເຂົາຖອຍອອກໄປ ຈາກທີ່ປະທັບ
ຂອງພຣະຜູ້ເປັນເຈົ້າ ໄປຫາສະພາບແຫ່ງ
[ຂ]ຄວາມທຸກຍາກ ແລະ ຄວາມທໍລະມານ
ທີ່ບໍ່ມີວັນສິ້ນສຸດ ຊຶ່ງຈາກນັ້ນພວກເຂົາຈະ
ກັບມາອີກບໍ່ໄດ້; ສະນັ້ນພວກເຂົາຈຶ່ງໄດ້
ກິນຄວາມອັບປະໂຫຍດເຂົ້າໄປສູ່ຈິດວິນ
ຍານຂອງພວກເຂົາແລ້ວ.
26 ສະນັ້ນ ພວກເຂົາໄດ້ດື່ມຈາກຈອກ
ແຫ່ງພຣະພິໂລດຂອງພຣະເຈົ້າແລ້ວ, ຊຶ່ງ
ຄວາມຍຸດຕິທຳນັ້ນປະຕິເສດພວກເຂົາບໍ່
ໄດ້ດັ່ງທີ່ປະຕິເສດບໍ່ໄດ້ວ່າ [ກ]ອາດາມຈະ
ຕົກເພາະການຮັບສ່ວນ [ຂ]ໝາກໄມ້ທີ່ຕ້ອງ
ຫ້າມນັ້ນ; ສະນັ້ນ, [ຄ]ຄວາມເມດຕາຈະມີສິດ
ເໜືອພວກເຂົາອີກບໍ່ໄດ້ຕະຫລອດການ.
27 ແລະ [ກ]ຄວາມທຸກທໍລະມານຂອງ
ພວກເຂົາຈະເປັນເໝືອນດັ່ງ [ຂ]ທະເລໄຟ
ແລະ ມາດ ຊຶ່ງແປວໄຟນັ້ນບໍ່ຮູ້ຈັກມອດ
ແລະ ຄວັນມັນລອຍຂຶ້ນຢູ່ຕະຫລອດການ
ແລະ ຕະຫລອດໄປ. ພຣະຜູ້ເປັນເຈົ້າໄດ້
ບັນຊາຂ້າພະເຈົ້າດັ່ງນີ້. ອາແມນ.

## ບົດທີ 4

*ຄຳປາໄສຂອງກະສັດເບັນຢາມິນຕໍ່—ຄວາມລອດມາເຖິງ ເພາະການຊົດໃຊ້—ເຊື່ອໃນພຣະເຈົ້າເພື່ອຈະໄດ້ລອດ—ໄດ້ຮັບການປົດບາບຂອງທ່ານຜ່ານຄວາມຊື່ສັດ—ໃຫ້ເຂົ້າຂອງ ຂອງພວກທ່ານແກ່ຄົນຍາກຈົນ—ໃຫ້ກະທຳທຸກຢ່າງດ້ວຍປັນຍາ ແລະ ໃຫ້ເປັນລະບຽບຮຽບຮ້ອຍ. ປະມານ 124 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອກະສັດເບັນຢາມິນເວົ້າຂໍ້ຄວາມຊຶ່ງ
ເພິ່ນໄດ້ຮັບມອບໝາຍຈາກທູດຂອງພຣະ
ຜູ້ເປັນເຈົ້າຈົບແລ້ວ, ເພິ່ນໄດ້ກວາດສາຍ
ຕາໄປຮອບໆເບິ່ງຝູງຊົນ, ແລະ ຈົ່ງເບິ່ງ
ພວກເຂົາລົ້ມຢູ່ກັບພື້ນດິນເພາະ [ກ]ຄວາມ

25 *ກ* ແອວ 5:18; 12:14–15.
*ຂ* ມມ 8:38.
26 *ກ* ມມ 9:12.
*ຂ* ປຖກ 3:1–12;
2 ນຟ 2:15–19;
ແອວ 12:21–23.
*ຄ* ຄມພ ເມດຕາ, ມີເມດ
ຕາ, ຄວາມເມດຕາ.
27 *ກ* ຄມພ ຮູ້ສຶກຜິດ,
ຄວາມຮູ້ສຶກຜິດ.
*ຂ* 2 ນຟ 9:16;
ຢຄ 6:10;
ຄພ 76:36.
4 1 *ກ* ຄມພ ຢ້ານກົວ,
ຄວາມຢ້ານກົວ.

ຢ້ານກົວພຣະຜູ້ເປັນເຈົ້າໄດ້ເກີດກັບພວກ
ເຂົາແລ້ວ.
2 ແລະ ພວກ ເຂົາ ເຫັນ ຕົວ ເອງ ຢູ່ ໃນ
ສະພາບ ແຫ່ງ [ກ]ການມະ ລົນ, ເຖິງແມ່ນມີ
ຄຸນຄ່າ [ຂ]ນ້ອຍກວ່າ ຂີ້ ຝຸ່ນ ຂອງ ແຜ່ນດິນ
ໂລກ. ແລະ ພວກເຂົາທັງໝົດຮ້ອງອອກມາ
ເປັນສຽງດຽວກັນວ່າ: ໂອ້ ຂໍຊົງໂປດເມດຕາ
ແລະ ໂປດໃຊ້ໂລຫິດທີ່ [ຄ]ຊົດໃຊ້ຂອງພຣະ
ຄຣິດ ເພື່ອພວກຂ້ານ້ອຍຈະໄດ້ຮັບການໃຫ້
ອະໄພຈາກບາບຂອງພວກຂ້ານ້ອຍ, ແລະ
ເພື່ອໃຈຂອງພວກຂ້ານ້ອຍຈະຖືກເຮັດໃຫ້
ບໍລິສຸດ; ເພາະພວກຂ້ານ້ອຍເຊື່ອໃນພຣະ
ເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ, ຜູ້ໄດ້
[ງ]ສ້າງສະຫວັນ ແລະ ແຜ່ນດິນໂລກ, ແລະ
ທຸກຢ່າງ; ຜູ້ຈະສະເດັດລົງມາໃນທ່າມກາງ
ລູກຫລານມະນຸດ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກ ພວກ ເຂົາ ໄດ້ເວົ້າ ຂໍ້ ຄວາມນີ້ແລ້ວ
ພຣະວິນຍານຂອງພຣະຜູ້ເປັນເຈົ້າ ກໍໄດ້
ສະເດັດມາເທິງພວກເຂົາ, ແລະ ພວກເຂົາ
ກໍເຕັມໄປດ້ວຍຄວາມສຸກ ໂດຍທີ່ໄດ້ຮັບ
[ກ]ການປົດບາບຂອງພວກເຂົາ, ແລະ ໂດຍ
ຄວາມສະຫງົບ ໃນ [ຂ]ຈິດສຳນຶກ, ເພາະ
[ຄ]ສັດທາອັນຍິ່ງໃຫຍ່ທີ່ພວກເຂົາມີຢູ່ໃນ
ພຣະເຢຊູຄຣິດ ຜູ້ຈະສະເດັດມາຕາມຂໍ້
ຄວາມ ຊຶ່ງກະສັດເບັນຢາມິນໄດ້ກ່າວກັບ
ພວກເຂົາ.
4 ແລະ ກະສັດເບັນຢາມິນໄດ້ເປີດປາກ
ອີກ ແລະ ເລີ່ມກ່າວກັບພວກເຂົາ, ມີຄວາມ
ວ່າ: ເພື່ອນຂອງຂ້າພະເຈົ້າ ແລະ ພີ່ນ້ອງ
ຂອງ ຂ້າ ພະ ເຈົ້າ, ຍາດ ຂອງຂ້າ ພະ ເຈົ້າ
ແລະ ຜູ້ຄົນ ຂອງຂ້າພະເຈົ້າ, ຂ້າພະເຈົ້າ
ຢາກໃຫ້ພວກທ່ານຕັ້ງໃຈຟັງອີກ ເພື່ອພວກ
ທ່ານຈະໄດ້ຍິນ ແລະ ເຂົ້າໃຈຂໍ້ຄວາມທີ່
ຍັງເຫລືອຢູ່ຊຶ່ງຂ້າພະເຈົ້າຈະເວົ້າກັບພວກ
ທ່ານ.
5 ເພາະ ຈົ່ງ ເບິ່ງ ຖ້າ ຫາກ ຄວາມ ຮູ້ ເຖິງ
ພຣະ ກະລຸນາທິຄຸນ ຂອງ [ກ]ພຣະ ເຈົ້າໃນ
ເວລານີ້ ປຸກພວກທ່ານໃຫ້ຮູ້ສຶກເຖິງຄວາມ
ບໍ່ມີຫຍັງ ແລະ ສະພາບທີ່ບໍ່ມີຄຸນຄ່າ ແລະ
ຄວາມຕົກຕ່ຳຂອງພວກທ່ານແລ້ວ—
6 ຂ້າພະເຈົ້າເວົ້າກັບພວກທ່ານອີກວ່າ
ຖ້າຫາກພວກທ່ານມາ [ກ]ຮູ້ເລື່ອງພຣະກະລຸ
ນາທິຄຸນຂອງພຣະເຈົ້າ ແລະ ອຳນາດອັນ
ຫາທີ່ປຽບບໍ່ໄດ້ຂອງພຣະອົງ, ແລະ ຄວາມ
ສະຫລຽວສະຫລາດຂອງພຣະອົງ, ແລະ
ຄວາມອົດທົນຂອງພຣະອົງ, ແລະ ຄວາມ
ອົດ ກັ້ນ ຂອງ ພຣະ ອົງ ທີ່ ມີ ຕໍ່ ລູກຫລານ
ມະນຸດ; ແລະ [ຂ]ການຊົດໃຊ້ນຳອີກ ຊຶ່ງຕຽມ
ໄວ້ນັບຕັ້ງແຕ່ [ຄ]ການວາງຮາກຖານຂອງ
ໂລກ, ເພື່ອໂດຍການນັ້ນຄວາມລອດຈະ
ໄດ້ມາເຖິງຄົນທີ່ [ງ]ວາງໃຈຂອງຕົນໃນພຣະ
ຜູ້ເປັນເຈົ້າ ແລະ ພາກພຽນໃນການຮັກສາ
ພຣະບັນຍັດຂອງພຣະອົງ, ແລະ ດຳເນີນຕໍ່
ໄປໃນສັດທາເຖິງແມ່ນຈົນເຖິງທີ່ສຸດຂອງຊີ
ວິດຂອງພວກເຂົາ, ຂ້າພະເຈົ້າໝາຍເຖິງຊີ
ວິດຂອງຮ່າງກາຍທີ່ເປັນມະຕະນີ້—
7 ຂ້າພະເຈົ້າກ່າວວ່າ ນີ້ຄືຄົນທີ່ໄດ້ຮັບ
ຄວາມລອດ ໂດຍຜ່ານທາງການຊົດໃຊ້
ຊຶ່ງມີຕຽມໄວ້ນັບຕັ້ງແຕ່ການວາງຮາກ

---

2 ກ ຄມພ ການມະລົນ.
ຂ ຣລມ 12:7–8.
ຄ ມຊຢ 3:18; ຣລມ 5:9.
ງ ຄມພ ສ້າງ, ການສ້າງ.
3 ກ ຄມພ ປົດບາບ, ການປົດບາບ.
ຂ ຄມພ ສຳນຶກ, ຄວາມສຳນຶກ.
ຄ ຄມພ ສັດທາ.
5 ກ ມຊ 1:10.
6 ກ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
ຂ ຄມພ ຊົດໃຊ້, ການຊົດໃຊ້.
ຄ ມຊຢ 15:19.
ງ ພສສ 36:7; 2 ນຟ 22:2; ຣລມ 12:1. ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.

ຖານ ຂອງ ໂລກ ເພື່ອ ມະນຸດ ຊາດ ທັງ ປວງ, ຊຶ່ງ ເຄີຍ ເປັນ ຢູ່ ມາ ຕັ້ງ ແຕ່ ກການ ຕົກ ຂອງ ອາດາມ, ຫລື ທີ່ເປັນຢູ່, ຫລື ທີ່ຈະເປັນຢູ່, ຕໍ່ ໄປເຖິງແມ່ນຈົນເຖິງຄາວສິ້ນສຸດໂລກ.

8 ແລະ ນີ້ ຄື ເສັ້ນ ທາງ ຊຶ່ງ ຄວາມ ລອດ ຈະມາເຖິງ. ແລະ ກບໍ່ມີຄວາມລອດອື່ນຊຶ່ງ ມະນຸດຈະລອດໄດ້ນອກຈາກຄວາມລອດນີ້ ຊຶ່ງຂ້າພະເຈົ້າໄດ້ບອກພວກທ່ານໄວ້; ທັງບໍ່ ມີເງື່ອນໄຂໃດຊຶ່ງຕາມນັ້ນມະນຸດຈະລອດ ໄດ້ເວັ້ນເສຍແຕ່ເງື່ອນໄຂຊຶ່ງຂ້າພະເຈົ້າໄດ້ ບອກພວກທ່ານແລ້ວ.

9 ຈົ່ງເຊື່ອໃນພຣະເຈົ້າ; ຈົ່ງເຊື່ອວ່າພຣະ ອົງ ໄດ້ ເປັນ ຢູ່, ແລະ ວ່າພຣະອົງ ໄດ້ ສ້າງ ທຸກ ສິ່ງ, ທັງ ໃນ ສະຫວັນ ແລະ ໃນ ແຜ່ນ ດິນ ໂລກ; ຈົ່ງ ເຊື່ອວ່າພຣະອົງມີ ກຄວາມ ສະຫລຽວສະຫລາດ ແລະ ອຳນາດທັງໝົດ ທັງໃນສະຫວັນ ແລະ ແຜ່ນດິນໂລກ; ຈົ່ງ ເຊື່ອ ວ່າ ມະນຸດ ບໍ່ ຂເຂົ້າ ໃຈທຸກໆຢ່າງຊຶ່ງ ພຣະຜູ້ເປັນເຈົ້າເຂົ້າໃຈໄດ້.

10 ແລະ ອີກຢ່າງໜຶ່ງ, ຈົ່ງເຊື່ອວ່າພວກ ທ່ານຕ້ອງ ກກັບ ໃຈ ຈາກ ບາບ ຂອງ ພວກ ທ່ານ, ແລະ ປະຖິ້ມມັນ ແລະ ຖ່ອມຕົວຕໍ່ ພຣະພັກຂອງພຣະເຈົ້າ; ແລະ ທູນຂໍດ້ວຍ ໃຈຈິງໃຫ້ພຣະອົງ ຂອະໄພໃຫ້ພວກທ່ານ; ແລະ ບັດນີ້, ຖ້າຫາກພວກທ່ານ ຄເຊື່ອສິ່ງ ທັງໝົດນີ້ ໃຫ້ເບິ່ງວ່າພວກທ່ານ ງເຮັດຕາມ ນັ້ນ.

11 ແລະ ອີກ ຢ່າງ ໜຶ່ງ ຂ້າ ພະ ເຈົ້າ ເວົ້າ ກັບ ພວກ ທ່ານ ດັ່ງ ທີ່ ຂ້າ ພະ ເຈົ້າ ໄດ້ ເວົ້າ ມາ ກ່ອນ ແລ້ວ ວ່າ ເມື່ອ ພວກ ທ່ານ ມາ ເຖິງ ຄວາມ ຮູ້ ເລື່ອງ ລັດ ສະ ໝີ ພາບ ຂອງ ພຣະ ເຈົ້າ, ຫລື ຖ້າຫາກພວກທ່ານຮູ້ເຖິງພຣະ ກະລຸນາທິຄຸນຂອງພຣະອົງ, ແລະ ກຊີມລົດ ຊາດຄວາມຮັກຂອງພຣະອົງ, ແລະ ໄດ້ຮັບ ຂການປົດບາບຂອງພວກທ່ານ ຊຶ່ງເຮັດໃຫ້ ເກີດມີຄວາມຊື່ນຊົມຢ່າງລົ້ນເຫລືອໃນຈິດ ວິນຍານຂອງພວກທ່ານແລ້ວ, ເຖິງເຊັ່ນ ນັ້ນຂ້າພະເຈົ້າຍັງຢາກໃຫ້ພວກທ່ານຈື່ຈຳ ແລະ ເກັບໄວ້ໃນຄວາມຊົງຈຳສະເໝີເຖິງ ຄວາມຍິ່ງໃຫຍ່ຂອງພຣະເຈົ້າກັບ ຄຄວາມ ບໍ່ ມີຄ່າ ຫຍັງ ຂອງ ພວກ ທ່ານ ເອງ, ແລະ ງພຣະກະລຸນາທິຄຸນ ແລະ ຄວາມອົດກັ້ນ ຂອງພຣະອົງທີ່ມີຕໍ່ພວກທ່ານ ເປັນຜູ້ບໍ່ມີ ຄ່າຄວນ, ແລະ ຈົ່ງຖ່ອມຕົວຂອງພວກທ່ານ ເຖິງແມ່ນເຖິງສ່ວນເລິກແຫ່ງ ຈຄວາມຖ່ອມ ຕົວໂດຍ ສເອີ້ນຫາພຣະນາມຂອງພຣະຜູ້ ເປັນເຈົ້າທຸກມື້, ແລະ ຢືນຢູ່ຢ່າງໝັ້ນຄົງຢູ່ ໃນສັດທາຂອງສິ່ງທີ່ຈະມາເຖິງ, ຊຶ່ງໄດ້ເວົ້າ ໄວ້ຈາກປາກຂອງທູດເອງ.

12 ແລະ ຈົ່ງ ເບິ່ງ, ຂ້າພະເຈົ້າກ່າວກັບ ພວກທ່ານວ່າ ຖ້າຫາກພວກທ່ານເຮັດສິ່ງນີ້ ພວກທ່ານຈະປິຕິຍິນດີຢູ່ສະເໝີ ແລະ ຈະ ເຕັມໄປດ້ວຍ ກຄວາມຮັກຂອງພຣະເຈົ້າ, ແລະ ການປົດບາບຂອງພວກທ່ານຈະ ຂມີ ຢູ່ສະເໝີ; ແລະ ພວກທ່ານຈະເຕີບໂຕໃນ ຄວາມຈະເລີນຮຸ່ງເຮືອງ ແລະ ໃນລັດສະ ໝີພາບຂອງພຣະອົງຜູ້ສ້າງພວກທ່ານ, ຫລື ໃນຄວາມຮູ້ເຖິງສິ່ງທີ່ທ່ຽງທຳ ແລະ ຈິງ.

7 *ກ* ຄມພ ການຕົກຂອງ ອາດາມ ແລະ ເອວາ.
8 *ກ* ກຈກ 4:12; 2 ນຟ 31:21; ມຊຢ 3:17.
9 *ກ* ຣມ 11:33–34; ຢຄ 4:8–13.
*ຂ* ອຊຢ 55:9.
10 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຄພ 61:2.
*ຄ* ມທ 7:24–27.
*ງ* 2 ນຟ 31:19–21.
11 *ກ* ແອວ 36:24–26.
*ຂ* ຄມພ ປົດບາບ, ການປົດບາບ.
*ຄ* ມຊ 1:10.
*ງ* ອພຍ 34:6; ມຣນ 8:3.
*ຈ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ສ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
12 *ກ* ຄມພ ຮັກ, ຄວາມຮັກ.
*ຂ* ມຊຢ 4:26; ແອວ 4:13–14; 5:26–35; ຄພ 20:31–34.

13 ແລະ ພວກທ່ານຈະບໍ່ມີຈິດໃຈທີ່ຈະ
ເຮັດສິ່ງອັນຕະລາຍໃຫ້ຊຶ່ງກັນ ແລະ ກັນ,
ແຕ່ຈະຢູ່ນຳກັນ [ກ]ຢ່າງສັນຕິ, ແລະ ມອບໃຫ້
ທຸກຄົນຕາມທີ່ເຂົາຄວນຈະໄດ້ຮັບ.
14 ແລະ ພວກທ່ານຈະບໍ່ປ່ອຍໃຫ້ [ກ]ລູກ
ຫລານຂອງພວກທ່ານຫິວໂຫຍ ຫລື ເປືອຍ
ເປົ່າ; ທັງພວກທ່ານຈະບໍ່ປ່ອຍໃຫ້ພວກເຂົາ
ລ່ວງລະເມີດກົດຂອງພຣະເຈົ້າ, ແລະ [ຂ]ຕໍ່ສູ້
ແລະ ຜິດຖຽງກັນ, ແລະ ຮັບໃຊ້ມານຜູ້ເປັນ
ນາຍຂອງບາບ, ຫລື ຜູ້ເປັນວິນຍານຊົ່ວ ຊຶ່ງ
ບັນພະບຸລຸດຂອງພວກເຮົາເວົ້າເຖິງ ຊຶ່ງມັນ
ເປັນສັດຕູກັບຄວາມຊອບທຳທັງປວງ.
15 ແຕ່ພວກທ່ານຈະ [ກ]ສິດສອນໃຫ້ພວກ
ເຂົາ [ຂ]ເດີນໃນເສັ້ນທາງແຫ່ງຄວາມຈິງ
ແລະ ຄວາມມີສະຕິສຳປະສັນຍະ; ພວກ
ທ່ານຈະສິດສອນໃຫ້ພວກເຂົາ [ຄ]ຮັກກັນ
ແລະ ຮັບໃຊ້ຊຶ່ງກັນແລະກັນ.
16 ແລະ ພ້ອມນີ້ຕົວພວກທ່ານເອງຈະ
[ກ]ຊ່ວຍເຫລືອຄົນທີ່ຕ້ອງການຄວາມຊ່ວຍ
ເຫລືອ; ພວກທ່ານຈະໃຫ້ເຂົ້າຂອງ ຂອງ
ພວກທ່ານແກ່ຄົນທີ່ຂັດສົນ; ແລະ ພວກ
ທ່ານຈະບໍ່ປ່ອຍໃຫ້ [ຂ]ຄົນຂໍທານຂໍທ່ານ
ໂດຍຜິດຫວັງ, ແລະ ໄລ່ເຂົາອອກໄປໃຫ້
ຕາຍ.
17 ບາງທີພວກທ່ານອາດຈະ [ກ]ເວົ້າວ່າ:
ຄົນນີ້ນຳຄວາມທຸກຍາກມາສູ່ຕົນເອງ;
ສະນັ້ນ, ເຮົາຈະຢັບຢັ້ງມືຂອງເຮົາໄວ້,
ແລະ ຈະບໍ່ໃຫ້ເຂົ້າຂອງ ຫລື ບໍ່ໃຫ້ອາຫານ
ຂອງເຮົາແກ່ເຂົາເພື່ອວ່າເຂົາຈະບໍ່ໄດ້ທຸກ
ທໍລະມານ ເພາະໂທດຂອງເຂົານັ້ນທ່ຽງ
ທຳແລ້ວ—
18 ແຕ່ຂ້າພະເຈົ້າເວົ້າກັບພວກທ່ານວ່າ,
ໂອ້ ມະນຸດ, ຜູ້ໃດກໍຕາມທີ່ກະທຳເຊັ່ນນີ້
ຜູ້ນັ້ນຍ່ອມມີເຫດຜົນສຳຄັນທີ່ຈະກັບໃຈ;
ແລະ ຖ້າຫາກເຂົາບໍ່ກັບໃຈໃນສິ່ງທີ່ເຂົາ
ກະທຳໄປ ເຂົາຍ່ອມຕາຍຕະຫລອດການ,
ແລະ ບໍ່ໄດ້ສິ່ງໃດເລີຍໃນອານາຈັກຂອງ
ພຣະເຈົ້າ.
19 ເພາະ ຈົ່ງເບິ່ງ, ພວກເຮົາບໍ່ໄດ້ເປັນ
ຄົນຂໍທານທັງໝົດບໍ? ພວກເຮົາບໍ່ໄດ້ອາ
ໄສພຣະເຈົ້າອົງດຽວກັນ, ເພື່ອເຂົ້າຂອງທັງ
ໝົດ ຊຶ່ງພວກເຮົາມີຢູ່ເພື່ອອາຫານ ແລະ
ເຄື່ອງນຸ່ງຫົ່ມ, ແລະ ເພື່ອຄຳ, ແລະ ເງິນ,
ແລະ ເພື່ອຂອງມີຄ່າທັງໝົດທີ່ພວກເຮົາມີ
ຢູ່ທຸກຊະນິດບໍ?
20 ແລະ ຈົ່ງເບິ່ງ, ເຖິງແມ່ນໃນເວລານີ້,
ພວກທ່ານກໍເອີ້ນຫາພຣະນາມຂອງພຣະ
ອົງຢູ່, ເພື່ອທູນຂໍການປົດບາບຂອງພວກ
ທ່ານ. ແລະ ພຣະອົງຈະປ່ອຍໃຫ້ພວກທ່ານ
ຂໍໂດຍຜິດຫວັງບໍ? ບໍ່ເລີຍ; ພຣະອົງໄດ້ເທ
ພຣະວິນຍານຂອງພຣະອົງລົງມາເທິງພວກ
ທ່ານ, ແລະ ເຮັດໃຫ້ໃຈຂອງພວກທ່ານ
ເຕັມໄປດ້ວຍ [ກ]ຄວາມສຸກ, ແລະ ເຮັດໃຫ້
ປາກຂອງພວກທ່ານຢຸດຈົນພວກທ່ານຫາ
ຄຳເວົ້າມາເວົ້າບໍ່ໄດ້, ເພາະຄວາມຊື່ນຊົມ
ຂອງພວກທ່ານນັ້ນລົ້ນເຫລືອ.
21 ແລະ ບັດນີ້, ຖ້າຫາກພຣະເຈົ້າຜູ້ໄດ້
ສ້າງພວກທ່ານມາ, ຜູ້ທີ່ພວກທ່ານອາໄສ
ເພື່ອຊີວິດ ແລະ ເພື່ອທຸກສິ່ງທີ່ພວກທ່ານ
ເຄີຍມີ ແລະ ມີຢູ່ນີ້, ໄດ້ປະທານສິ່ງໃດກໍ

13 ກ ຄມພ ຄົນທີ່ສ້າງ ຄວາມສະຫງົບສຸກ.
14 ກ 1 ຕມທ 5:8; ຄພ 83:4.
ຂ ຄມພ ຂັດແຍ້ງ, ການຂັດແຍ້ງ.
15 ກ ຄພ 68:25–28; ມຊ 6:58. ຄມພ ສອນ, ຜູ້ສອນ, ຄູສອນ.
ຂ ຄມພ ເດີນ, ເດີນໄປ ກັບພຣະເຈົ້າ.
ຄ ມຊຢ 18:21.
16 ກ ຄມພ ໃຈບຸນ, ຄວາມໃຈບຸນ; ຮັບໃຊ້, ການຮັບໃຊ້.
ຂ ພບຍ 15:7–11; ສພສ 21:13; ອຊຢ 10:1–2.
17 ກ ສພສ 17:5.
20 ກ ຄມພ ຊື່ນຊົມ, ຄວາມຊື່ນຊົມ.

ຕາມທີ່ພວກທ່ານຂໍດ້ວຍສັດທາ, ໂດຍເຊື່ອ
ວ່າພວກທ່ານຈະໄດ້ຮັບ, ຊຶ່ງເປັນສິ່ງທີ່ຖືກ
ຕ້ອງ ໃຫ້ ແກ່ພວກ ທ່ານ, ໂອ້ ແລ້ວພວກ
ທ່ານຄວນຈະ [ກ]ໃຫ້ເຂົ້າຂອງທີ່ພວກທ່ານມີ
ໃຫ້ກັນພຽງໃດ.
22 ແລະ ຖ້າຫາກພວກທ່ານ [ກ]ຕັດສິນຄົນ
ທີ່ຂໍສິ່ງຂອງຈາກພວກທ່ານເພື່ອເຂົາຈະບໍ່
ຕາຍ, ແລະ ກ່າວໂທດເຂົາແລ້ວ, ການກ່າວ
ໂທດພວກທ່ານຈະທ່ຽງທຳຫລາຍກວ່ານັ້ນ
ພຽງໃດ ເພາະ [ຂ]ບໍ່ແບ່ງປັນເຂົ້າຂອງ ຂອງ
ພວກທ່ານ, ຊຶ່ງບໍ່ແມ່ນຂອງພວກທ່ານ ແຕ່
ເປັນຂອງພຣະເຈົ້າ, ຜູ້ເປັນເຈົ້າຂອງຊີວິດ
ຂອງພວກທ່ານນັ້ນອີກ; ແລະ ປານນັ້ນ
ພວກທ່ານຍັງບໍ່ຂໍ, ຫລື ກັບໃຈຈາກສິ່ງທີ່
ພວກທ່ານກະທຳໄປ.
23 ຂ້າ ພະ ເຈົ້າ ເວົ້າ ກັບ ພວກ ທ່ານ ວ່າ,
ວິບັດແກ່ຄົນນັ້ນ, ເພາະເຂົ້າຂອງ ຂອງເຂົາ
ຈະຕາຍພ້ອມກັບເຂົາ; ແລະ ບັດນີ້, ຂ້າພະ
ເຈົ້າກ່າວເລື່ອງເຫລົ່ານີ້ກັບຄົນທີ່ [ກ]ຮັ່ງມີໃນ
ສິ່ງຂອງຕ່າງໆຢູ່ໃນໂລກນີ້.
24 ແລະ ອີກຢ່າງໜຶ່ງ, ຂ້າພະເຈົ້າກ່າວ
ກັບຄົນຍາກຈົນວ່າ, ພວກທ່ານຜູ້ບໍ່ມີແຕ່ຍັງ
ມີພຽງພໍທີ່ພວກທ່ານຈະຢູ່ໄປແຕ່ລະມື້; ຂ້າ
ພະເຈົ້າໝາຍເຖິງທ່ານທັງຫລາຍທີ່ປະຕິ
ເສດຄົນຂໍທານຍ້ອນຄວາມບໍ່ມີຂອງພວກ
ທ່ານ; ຂ້າພະເຈົ້າຢາກໃຫ້ພວກທ່ານເວົ້າຢູ່
ໃນໃຈວ່າ: ເຮົາບໍ່ໃຫ້ຍ້ອນວ່າເຮົາບໍ່ມີ, ແຕ່
ຖ້າຫາກເຮົາມີ ເຮົາຈະ [ກ]ໃຫ້.
25 ແລະ ບັດນີ້ຖ້າຫາກພວກທ່ານເວົ້າ
ຢູ່ໃນໃຈແບບນີ້ ພວກທ່ານກໍຢູ່ໂດຍບໍ່ມີ
ຄວາມຜິດ, ຖ້າບໍ່ດັ່ງນັ້ນ ພວກທ່ານຈະຖືກ
[ກ]ກ່າວໂທດ; ແລະ ການກ່າວໂທດຂອງ
ພວກທ່ານນັ້ນທ່ຽງທຳ ເພາະພວກທ່ານ
ໂລບມາກນຳສິ່ງທີ່ພວກທ່ານບໍ່ໄດ້ຮັບ.
26 ແລະ ບັດນີ້ເພາະເຫັນແກ່ສິ່ງເຫລົ່າ
ນີ້ ຊຶ່ງຂ້າພະເຈົ້າໄດ້ກ່າວກັບພວກທ່ານ
ແລ້ວ—ນັ້ນຄື, ເພື່ອໃຫ້ມີການປົດບາບ
ຂອງພວກທ່ານໄປແຕ່ລະວັນ ເພື່ອພວກ
ທ່ານຈະ [ກ]ເດີນໄປໂດຍບໍ່ມີຄວາມຜິດຕໍ່
ພຣະພັກຂອງພຣະເຈົ້າ—ຂ້າພະເຈົ້າຢາກ
ໃຫ້ພວກທ່ານ [ຂ]ໃຫ້ເຂົ້າຂອງ ຂອງພວກ
ທ່ານໃຫ້ແກ່ [ຄ]ຄົນຍາກຈົນທຸກຄົນຕາມທີ່
ມີເປັນຕົ້ນວ່າ [ງ]ລ້ຽງອາຫານຄົນຫິວໂຫຍ,
ໃຫ້ເສື້ອຜ້າແກ່ຄົນເປືອຍເປົ່າ, ຢ້ຽມຢາມ
ຄົນເຈັບປ່ວຍ ແລະໃຫ້ຄວາມຊ່ວຍເຫລືອ,
ເພື່ອບັນເທົາຄົນເຫລົ່ານັ້ນທາງວິນຍານ
ແລະ ທາງຮ່າງກາຍ, ຕາມຄວາມຕ້ອງການ
ຂອງພວກເຂົາ.
27 ແລະ ໃຫ້ເບິ່ງວ່າເຮັດສິ່ງທັງໝົດນີ້
ດ້ວຍປັນຍາ ແລະ ເປັນລະບຽບ; ເພາະບໍ່
ຈຳເປັນທີ່ຄົນຈະແລ່ນ [ກ]ໄວກວ່າກຳລັງຂອງ
ຕົນ. ແລະ ອີກຢ່າງໜຶ່ງ, ສົມຄວນທີ່ເຂົາ
ຈະພາກພຽນເພື່ອໂດຍການນັ້ນເຂົາຈະໄດ້
ຮັບລາງວັນ; ສະນັ້ນ, ທຸກຢ່າງຕ້ອງເປັນໄປ
ຕາມລະບຽບ.
28 ແລະ ຂ້າພະເຈົ້າຢາກໃຫ້ພວກທ່ານຈື່
ຈຳໄວ້ວ່າ ຜູ້ໃດກໍຕາມໃນບັນດາພວກທ່ານ
ທີ່ຂໍຢືມຈາກເພື່ອນບ້ານຂອງຕົນ ກໍຄວນ
ສົ່ງຄືນຂອງທີ່ຕົນຢືມມາຕາມທີ່ຕົກລົງກັນ
ໄວ້ ບໍ່ດັ່ງນັ້ນ ພວກທ່ານຈະກະທຳບາບ;
ແລະ ພວກທ່ານອາດຈະເຮັດໃຫ້ເພື່ອນ
ບ້ານຂອງພວກທ່ານກະທຳບາບຄືກັນ.

21 ກ ຄມພ ຄວາມຜາສຸກ; ຮັບໃຊ້, ການຮັບໃຊ້.
22 ກ ມທ 7:1–2; ຢຣ 7:24.
ຂ 1 ຢຮ 3:17.
23 ກ ຄພ 56:16.
24 ກ ມຣກ 12:44.
25 ກ ຄພ 56:17.
26 ກ ຄມພ ເດີນ, ເດີນໄປກັບພຣະເຈົ້າ.
ຂ ຢຄ 2:17–19.
ຄ ຊກຢ 7:10; ແອວ 1:27. ຄມພ ໃຫ້ທານ, ການໃຫ້ທານ.
ງ ອຊຢ 58:10–11; ຄພ 104:17–18.
27 ກ ຄພ 10:4.

29 ແລະ ສຸດ ທ້າຍ ນີ້, ຂ້າ ພະ ເຈົ້າ ບອກ
ພວກ ທ່ານ ບໍ່ ໄດ້ ທຸກ ເລື່ອງ ໂດຍ ການ ທີ່
ພວກທ່ານຈະກະທຳບາບ; ເພາະມີທາງ
ແລະ ວິທີຕ່າງໆຊຶ່ງມີຫລາຍຈົນຂ້າພະເຈົ້າ
ນັບບໍ່ໄດ້.
30 ແຕ່ ຂ້າ ພະ ເຈົ້າ ບອກ ພວກ ທ່ານ ໄດ້
ເທົ່ານີ້ຄື ຖ້າຫາກພວກທ່ານບໍ່ [ກ]ລະວັງຕົວ
ແລະ [ຂ]ຄວາມນຶກຄິດຂອງພວກທ່ານ, ແລະ
[ຄ]ຄຳເວົ້າຂອງພວກທ່ານ, ແລະ ການກະທຳ
ຂອງພວກທ່ານ, ແລະ ບໍ່ຍຶດຖືພຣະບັນຍັດ
ຂອງພຣະເຈົ້າ, ແລະ ບໍ່ດຳເນີນໄປດ້ວຍ
ສັດທາທີ່ພວກທ່ານໄດ້ຍິນກ່ຽວກັບການ
ສະເດັດມາຂອງພຣະຜູ້ເປັນເຈົ້າຂອງພວກ
ເຮົາ, ເຖິງແມ່ນຈົນເຖິງທີ່ສຸດແຫ່ງຊີວິດ
ຂອງພວກທ່ານແລ້ວ, ພວກທ່ານຈະຕ້ອງ
ຕາຍ. ແລະ ບັດນີ້, ໂອ້ ມະນຸດ, ຈົ່ງຈື່ຈຳຄຳ
ເຫລົ່ານີ້ໄວ້ ແລະ ຢ່າຕາຍເລີຍ.

## ບົດທີ 5

*ໄພ່ພົນຂອງພຣະເຈົ້າກາຍມາເປັນບຸດ ແລະ ທິດາຂອງພຣະຄຣິດຜ່ານສັດທາ—ແລ້ວພວກເຂົາຖືກເອີ້ນຕາມພຣະນາມຂອງພຣະຄຣິດ—ກະສັດເບັນຢາມິນຂໍຮ້ອງພວກເຂົາໃຫ້ແນ່ວແນ່ ແລະ ບໍ່ຫວັ່ນໄຫວຢູ່ໃນການກະທຳຄວາມດີ. ປະມານ 124 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອກະສັດເບັນຢາມິນໄດ້ກ່າວກັບຜູ້ຄົນ
ຂອງເພິ່ນແລ້ວ, ເພິ່ນໄດ້ສອບຖາມໃນບັນ
ດາຜູ້ຄົນ ໂດຍປາດຖະໜາຢາກຮູ້ວ່າ ພວກ
ເຂົາເຊື່ອຄຳເວົ້າທີ່ເພິ່ນກ່າວໄປຫລືບໍ່.
2 ແລະ ພວກເຂົາທຸກຄົນຮ້ອງອອກມາ
ເປັນສຽງດຽວກັນ, ໂດຍກ່າວວ່າ: ແທ້ຈິງ
ແລ້ວ, ພວກເຮົາເຊື່ອຄຳເວົ້າທັງໝົດທີ່ທ່ານ
ເວົ້າກັບພວກເຮົາ, ແລະ ພວກເຮົາຮູ້ເຖິງ
ຄວາມແນ່ນອນ ແລະ ຄວາມຈິງຂອງມັນ
ທັງໝົດ, ເພາະພຣະວິນຍານຂອງພຣະຜູ້
ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່ ໄດ້
ກະທຳ ໃຫ້ ມີ [ກ]ການ ປ່ຽນ ແປງ ອັນ ໃຫຍ່
ຫລວງໃນພວກເຮົາ, ຫລື ໃນໃຈຂອງພວກ
ເຮົາ, ຈົນວ່າພວກເຮົາບໍ່ມີໃຈທີ່ຈະກະທຳ
[ຂ]ຄວາມຊົ່ວອີກຕໍ່ໄປ, ແຕ່ປາດຖະໜາຈະ
ເຮັດແຕ່ຄວາມດີໂດຍຕະຫລອດ.
3 ແລະ ພວກເຮົາຄືກັນ, ຜ່ານພຣະກະລຸ
ນາທິຄຸນຂອງພຣະເຈົ້າ ແລະ ການສະແດງ
ໃຫ້ປະຈັກຂອງພຣະວິນຍານຂອງພຣະ
ອົງ, ພວກເຮົາຈຶ່ງສາມາດເຫັນກວ້າງໄກ
ກ່ຽວກັບສິ່ງທີ່ຈະມາເຖິງ; ແລະ ຖ້າຫາກສົມ
ຄວນພວກເຮົາຈະສາມາດທຳນາຍເຖິງທຸກ
ຢ່າງໄດ້.
4 ແລະ ເປັນ ເພາະ ສັດທາ ຊຶ່ງ ພວກ ເຮົາ
ມີຢູ່ແລ້ວໃນເລື່ອງທີ່ກະສັດຂອງພວກເຮົາ
ໄດ້ເວົ້າກັບພວກເຮົາເພື່ອນຳພວກເຮົາມາ
ຫາຄວາມຮູ້ອັນຍິ່ງໃຫຍ່ນີ້ ຊຶ່ງໂດຍການນີ້
ພວກເຮົາຈຶ່ງປິຕິຍິນດີດ້ວຍຄວາມຊື່ນຊົມ
ຢ່າງລົ້ນເຫລືອເຊັ່ນນີ້.
5 ແລະ ພວກເຮົາເຕັມໃຈທີ່ຈະເຂົ້າເຮັດ
[ກ]ພັນທະ ສັນ ຍາ ກັບ ພຣະ ເຈົ້າ ຂອງພວກ
ເຮົາ ເພື່ອຈະທຳຕາມພຣະປະສົງຂອງພຣະ
ອົງ, ແລະ ເພື່ອຈະໄດ້ເຊື່ອຟັງພຣະບັນຍັດ
ຂອງພຣະອົງຕະຫລອດວັນເວລາຂອງ
ພວກເຮົາ, ໃນທຸກເລື່ອງທີ່ພຣະອົງຈະບັນ
ຊາພວກເຮົາ, ເພື່ອພວກເຮົາຈະບໍ່ນຳເອົາ

30 *ກ* ແອວ 12:14.
ຄມພ ຍາມ, ຄົນຍາມ.
*ຂ* ມຣກ 7:18–23.
ຄມພ ຄວາມຄິດ.
*ຄ* ມທ 15:18–20.
ຄມພ ຄຳຫຍາບຄາຍ.
**5** 2 *ກ* ແອວ 5:14.
ຄມພ ເກີດໃໝ່, ເກີດ
ຈາກພຣະເຈົ້າ.
*ຂ* ແອວ 19:33.
5 *ກ* ມຊຢ 18:10.

ຄວາມທຸກທໍລະມານ [ຂ]ອັນບໍ່ມີວັນສິ້ນສຸດມາສູ່ຕົນເອງ ດັ່ງທີ່ [ຄ]ທູດໄດ້ເວົ້າໄວ້ ເພື່ອພວກເຮົາຈະບໍ່ໄດ້ດື່ມຈາກຈອກແຫ່ງພຣະພິໂລດຂອງພຣະເຈົ້າ.

6 ແລະ ບັດນີ້, ນີ້ຄືຄຳເວົ້າທີ່ກະສັດເບັນຢາມິນປາດຖະໜາຈາກຄົນເຫລົ່ານີ້; ແລະ ສະນັ້ນເພິ່ນຈຶ່ງກ່າວກັບພວກເຂົາວ່າ: ພວກທ່ານເວົ້າຂໍ້ຄວາມທີ່ຂ້າພະເຈົ້າປາດຖະໜາ; ແລະ ພັນທະສັນຍາຊຶ່ງພວກທ່ານເຮັດໄວ້ເປັນພັນທະສັນຍາທີ່ຊອບທຳ.

7 ແລະ ບັດນີ້ເພາະພັນທະສັນຍາທີ່ພວກທ່ານເຮັດໄວ້ ພວກທ່ານຈະຖືກເອີ້ນວ່າ [ກ]ລູກຂອງພຣະຄຣິດ, ບຸດຂອງພຣະອົງ, ແລະ ທິດາຂອງພຣະອົງ; ເພາະຈົ່ງເບິ່ງ, ມື້ນີ້ພຣະອົງໄດ້ [ຂ]ໃຫ້ກຳເນີດພວກທ່ານທາງວິນຍານ; ເພາະພວກທ່ານເວົ້າວ່າ [ຄ]ໃຈຂອງພວກທ່ານປ່ຽນແປງແລ້ວ ໂດຍມີສັດທາໃນພຣະນາມຂອງພຣະອົງ; ສະນັ້ນ, ພວກທ່ານຈຶ່ງຖືກ [ງ]ກຳເນີດຈາກພຣະອົງ ແລະ ມາເປັນ [ຈ]ບຸດ ແລະ ທິດາຂອງພຣະອົງ.

8 ແລະ ພາຍໃຕ້ຫົວໜ້າອົງນີ້, ພວກທ່ານໄດ້ຖືກເຮັດໃຫ້ເປັນ [ກ]ອິດສະລະ ແລະ [ຂ]ບໍ່ມີຫົວໜ້າອື່ນໃດ ຊຶ່ງຈະເຮັດໃຫ້ພວກທ່ານເປັນອິດສະລະໄດ້. ບໍ່ມີ [ຄ]ນາມອື່ນໃດໃຫ້ໄວ້ ຊຶ່ງໂດຍນາມນັ້ນຄວາມລອດຈະມາເຖິງໄດ້; ສະນັ້ນ, ຂ້າພະເຈົ້າຈຶ່ງຢາກໃຫ້ພວກທ່ານ [ງ]ຮັບເອົາພຣະນາມຂອງພຣະຄຣິດ, ຄືທ່ານທຸກຄົນທີ່ເຂົ້າເຮັດພັນທະສັນຍາກັບພຣະເຈົ້າ ວ່າພວກທ່ານຈະເຊື່ອຟັງໄປຈົນສິ້ນຊີວິດຂອງພວກທ່ານ.

9 ແລະ ເຫດການຈະບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ກະທຳເຊັ່ນນີ້ຈະໄດ້ຢູ່ທາງເບື້ອງຂວາພຣະຫັດຂອງພຣະເຈົ້າ, ເພາະເຂົາຈະຮູ້ຈັກຊື່ຊຶ່ງຈະເອີ້ນເຂົາຕາມຊື່ນັ້ນ; ເພາະເຂົາຈະຖືກເອີ້ນຕາມພຣະນາມຂອງພຣະຄຣິດ.

10 ແລະ ບັດນີ້ເຫດການຈະບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ຈະບໍ່ຮັບເອົາພຣະນາມຂອງພຣະຄຣິດຈະຕ້ອງຖືກເອີ້ນດ້ວຍຊື່ [ກ]ອື່ນ; ສະນັ້ນ, ເຂົາຈະໄດ້ຢູ່ໃນທາງ [ຂ]ເບື້ອງຊ້າຍພຣະຫັດຂອງພຣະເຈົ້າ.

11 ແລະ ຂ້າພະເຈົ້າຢາກໃຫ້ພວກທ່ານຈື່ຈຳໄວ້ອີກວ່າ ນີ້ຄື [ກ]ພຣະນາມທີ່ຂ້າພະເຈົ້າເວົ້າວ່າ ຂ້າພະເຈົ້າຈະໃຫ້ແກ່ພວກທ່ານຊຶ່ງມັນຈະບໍ່ຖືກລຶບໄປ, ເວັ້ນເສຍແຕ່ຈະເປັນໂດຍການລ່ວງລະເມີດ; ສະນັ້ນ, ຈົ່ງລະວັງເພື່ອພວກທ່ານຈະບໍ່ລ່ວງລະເມີດ, ເພື່ອພຣະນາມຈະບໍ່ຖືກລຶບຈາກໃຈຂອງພວກທ່ານ.

12 ຂ້າພະເຈົ້າເວົ້າກັບພວກທ່ານອີກວ່າ, ຂ້າພະເຈົ້າຢາກໃຫ້ພວກທ່ານຈື່ຈຳທີ່ຈະ [ກ]ຈາລຶກພຣະນາມໄວ້ໃນໃຈພວກທ່ານສະເໝີໄປ ເພື່ອພວກທ່ານຈະບໍ່ໄດ້ຢູ່ໃນທາງເບື້ອງຊ້າຍພຣະຫັດຂອງພຣະເຈົ້າ, ແຕ່ເພື່ອພວກທ່ານຈະໄດ້ຍິນ ແລະ ຮູ້ຈັກສຽງຊຶ່ງໂດຍສຽງນັ້ນທີ່ທ່ານຈະຖືກເອີ້ນ, ແລະ ຈົ່ງຈື່ຈຳພຣະນາມໄວ້ສະເໝີ ເພາະພຣະອົງຈະເອີ້ນພວກທ່ານໂດຍພຣະນາມນັ້ນ.

---

5 *ຂ* ມຊຢ 3:25–27.
*ຄ* ມຊຢ 3:2.
7 *ກ* ມຊຢ 27:24–26; ມຊ 6:64–68. ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
*ຂ* ຄມພ ທີ່ຖືກກຳເນີດ.
*ຄ* ຄມພ ໃຈ.
*ງ* ມຊຢ 15:10–11. ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.
*ຈ* ຄພ 11:30.
8 *ກ* ຣມ 6:18; ຄລຕ 5:1; ຣລມ 14:30.
*ຂ* ກຈກ 4:10, 12; ແອວ 21:9.
*ຄ* ມຊຢ 26:18.
*ງ* ກຈກ 11:26; ແອວ 46:15.
10 *ກ* ແອວ 5:38–39.
*ຂ* ມທ 25:33.
11 *ກ* ມຊຢ 1:11–12. ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
12 *ກ* ຄພ 18:23–25.

13 ເພາະແມ່ນໃຜຈະ [ກ]ຮູ້ຈັກນາຍຜູ້ເຂົາ
ບໍ່ເຄີຍຮັບໃຊ້ ແລະ ຊຶ່ງເປັນຄົນແປກໜ້າ
ສຳລັບເຂົາ, ແລະ ຢູ່ໄກຈາກຄວາມນຶກຄິດ
ແລະ ເຈດຕະນາຂອງໃຈເຂົາ?
14 ແລະ ອີກຢ່າງໜຶ່ງ, ຄົນຈະເອົາໂຕລໍ
ຊຶ່ງເປັນຂອງເພື່ອນບ້ານມາລ້ຽງບໍ? ຂ້າພະ
ເຈົ້າກ່າວກັບພວກທ່ານວ່າ, ບໍ່ເລີຍ; ເຂົາຈະ
ບໍ່ຍອມເຖິງແມ່ນໃຫ້ມັນມາຫາກິນຢູ່ໃນຝູງ
ສັດຂອງເຂົາ, ແຕ່ເຂົາຈະຂັບໄລ່ມັນອອກ
ໄປ. ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ມັນ
ຈະເປັນເຊັ່ນນັ້ນເຖິງແມ່ນຢູ່ໃນບັນດາພວກ
ທ່ານ ຖ້າຫາກພວກທ່ານບໍ່ຮູ້ຈັກຊື່ ຊຶ່ງຈະ
ເອີ້ນພວກທ່ານຕາມຊື່ນັ້ນ.
15 ສະນັ້ນ, ຂ້າພະເຈົ້າຢາກໃຫ້ພວກ
ທ່ານແນ່ວແນ່ ແລະ ບໍ່ຫວັ່ນໄຫວ, ແຕ່ເຕັມ
ໄປດ້ວຍວຽກງານດີຢູ່ສະເໝີ ເພື່ອພຣະ
ຄຣິດອົງພຣະຜູ້ເປັນເຈົ້າອົງຊົງລິດອຳນາດ
ຍິ່ງໃຫຍ່ຈະ [ກ]ຜະນຶກຕົວພວກທ່ານໄວ້
ເປັນຂອງພຣະອົງ, ເພື່ອພວກທ່ານຈະຖືກ
ນຳໄປຫາສະຫວັນ, ເພື່ອພວກທ່ານຈະມີ
ຄວາມລອດອັນເປັນນິດ ແລະ ມີຊີວິດນິ
ລັນດອນໂດຍປັນຍາ, ແລະ ອຳນາດ, ແລະ
ຄວາມຍຸດຕິທຳ, ແລະ ຄວາມເມດຕາຂອງ
ພຣະອົງຜູ້ [ຂ]ສ້າງທຸກສິ່ງໃນສະຫວັນ ແລະ
ໃນແຜ່ນດິນໂລກ, ຜູ້ຊຶ່ງເປັນພຣະເຈົ້າເໜືອ
ທຸກສິ່ງຢ່າງ. ອາແມນ.

## ບົດທີ 6

*ກະສັດເບັນຢາມິນບັນທຶກຊື່ຂອງຜູ້ຄົນ ແລະ ແຕ່ງຕັ້ງປະໂລຫິດເພື່ອສິດສອນພວກເຂົາ—ໂມໄຊຢາເປັນກະສັດປົກຄອງດ້ວຍຄວາມຊອບທຳ. ປະມານ 124–121 ປີກ່ອນ ຄ.ສ.*

1 ແລະ ບັດນີ້ຫລັງຈາກກະສັດເບັນຢາ
ມິນໄດ້ກ່າວກັບຜູ້ຄົນຈົບແລ້ວ, ເພິ່ນຄິດວ່າ
ມັນສົມຄວນທີ່ເພິ່ນຈະ [ກ]ຈົດຊື່ຄົນທັງປວງ
ໄວ້ຜູ້ທີ່ໄດ້ເຂົ້າເຮັດພັນທະສັນຍາກັບພຣະ
ເຈົ້າ ເພື່ອຈະຮັກສາພຣະບັນຍັດຂອງພຣະ
ອົງ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ບໍ່ມີ
ຈັກຄົນ ເວັ້ນເສຍແຕ່ເດັກນ້ອຍໆທີ່ບໍ່ໄດ້
ເຂົ້າເຮັດພັນທະສັນຍາ ແລະ ຮັບເອົາພຣະ
ນາມຂອງພຣະຄຣິດ.
3 ແລະ ອີກເທື່ອໜຶ່ງ ເຫດການໄດ້ບັງ
ເກີດຂຶ້ນຄື ເວລາທີ່ກະສັດເບັນຢາມິນກະ
ທຳເລື່ອງທັງໝົດນີ້ຈົບແລ້ວ, ແລະ ໄດ້ແຕ່ງ
ຕັ້ງ [ກ]ໂມໄຊຢາລູກຊາຍຂອງເພິ່ນໃຫ້ເປັນ
ກະສັດ ແລະ ເປັນຜູ້ດູແລຜູ້ຄົນຂອງເພິ່ນ,
ແລະ ມອບໝາຍໜ້າທີ່ທັງໝົດກ່ຽວກັບອາ
ນາຈັກໃຫ້, ແລະ ໄດ້ [ຂ]ແຕ່ງຕັ້ງປະໂລຫິດ
ເພື່ອ [ຄ]ສິດສອນຜູ້ຄົນນຳອີກ ເພື່ອໃຫ້ພວກ
ເຂົາໄດ້ຍິນ ແລະ ຮູ້ຈັກພຣະບັນຍັດຂອງ
ພຣະເຈົ້າ, ແລະ ເຮັດໃຫ້ພວກເຂົາສຳນຶກ
ເຖິງ [ງ]ຄຳສາບານທີ່ພວກເຂົາໄດ້ເຮັດໄວ້,
ເພິ່ນໄດ້ໃຫ້ຜູ້ຄົນເລີກລາກັນໄປ, ແລະ ທຸກ
ຄົນໄດ້ກັບໄປພ້ອມກັບຄອບຄົວເພື່ອໄປສູ່
ບ້ານເຮືອນຂອງໃຜລາວ.
4 ແລະ [ກ]ໂມໄຊຢາເລີ່ມປົກຄອງແທນ
ບິດາຂອງເພິ່ນ. ແລະ ເພິ່ນໄດ້ເລີ່ມປົກຄອງ
ໃນເວລາເພິ່ນມີອາຍຸໄດ້ສາມສິບປີ, ລວມ

13 *ກ* ມຊຢ 26:24–27.
15 *ກ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ; ເອີ້ນ, ການເອີ້ນ ແລະ ການເລືອກ.
*ຂ* ກລຊ 1:16; ມຊຢ 4:2; ແອວ 11:39.
**6** 1 *ກ* ຄພ 128:8.
3 *ກ* ມຊຢ 1:10; 2:30.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຄ* ແອວ 4:7.
*ງ* ມຊຢ 5:5–7.
4 *ກ* ຄມພ ໂມໄຊຢາ, ລູກຊາຍຂອງເບັນຢາມິນ.

ເປັນເວລາປະມານສີ່ຮ້ອຍເຈັດສິບຫົກປີ
ນັບຕັ້ງແຕ່ [ຂ]ເວລາທີ່ລີໄຮອອກຈາກເຢຣູ
ຊາເລັມມາ.
5 ແລະ ກະສັດເບັນຢາມິນມີອາຍຸຕື່ມພຽງ
ສາມປີ ແລະ ເພິ່ນກໍສິ້ນຊີວິດໄປ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກະສັດໂມໄຊຢາໄດ້ເດີນໃນທາງຂອງພຣະ
ຜູ້ເປັນເຈົ້າ, ແລະ ຍຶດຖືການພິພາກສາ
ຂອງພຣະອົງ ແລະ ຂໍ້ກຳນົດຂອງພຣະອົງ,
ແລະ ໄດ້ຮັກສາພຣະບັນຍັດຂອງພຣະອົງ
ທຸກຢ່າງບໍ່ວ່າອັນໃດກໍຕາມແລ້ວແຕ່ພຣະ
ອົງຈະບັນຊາເພິ່ນ.
7 ແລະ ກະສັດໂມໄຊຢາໄດ້ໃຫ້ຜູ້ຄົນ
ຂອງເພິ່ນໄຖດິນ ແລະ ເພິ່ນເອງກໍກະທຳ
ເຊັ່ນດຽວກັນ. ເພິ່ນໄດ້ໄຖດິນ ເພື່ອໂດຍ
ການນັ້ນ ເພິ່ນຈະ [ກ]ບໍ່ກາຍເປັນພາລະ ແກ່
ຜູ້ຄົນຂອງເພິ່ນ, ເພື່ອເພິ່ນຈະໄດ້ເຮັດຕາມ
ສິ່ງທີ່ບິດາຂອງເພິ່ນໄດ້ເຮັດໄວ້ທຸກຢ່າງ.
ແລະ ບໍ່ມີການຂັດແຍ້ງກັນເລີຍໃນບັນດາຜູ້
ຄົນຂອງເພິ່ນເປັນເວລາສາມປີ.

## ບົດທີ 7

*ອຳໂມນ ພົບພໍ້ແຜ່ນດິນລີໄຮ-ນີໄຟ ຊຶ່ງລິມໄຮເປັນກະສັດຢູ່ທີ່ນັ້ນ—ຜູ້ຄົນຂອງລິມໄຮເປັນທາດຂອງຊາວເລມັນ—ລິມໄຮທົບທວນປະຫວັດສາດຂອງເພິ່ນ—ສາດສະດາ (ອະບິນາໄດ) ໄດ້ເປັນພະຍານວ່າພຣະຄຣິດຄືພຣະເຈົ້າຂອງທຸກສິ່ງ—ຜູ້ທີ່ຫວ່ານຄວາມສົກກະປົກຈະເກັບກ່ຽວແກບຂອງມັນໃນລົມບ້າໝູ, ແລະ ຜູ້ທີ່ໝັ້ນໃຈໃນພຣະຜູ້ເປັນເຈົ້າຈະໄດ້ຮັບການປົດປ່ອຍ. ປະມານ 121 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກກະສັດໂມໄຊຢາໄດ້ຢູ່ຢ່າງ
ສັນຕິສຸກຕິດຕໍ່ກັນເປັນເວລາສາມປີ, ເພິ່ນ
ຈຶ່ງປາດຖະໜາຢາກຮູ້ຈັກກ່ຽວກັບຜູ້ຄົນທີ່
[ກ]ຂຶ້ນໄປໃນແຜ່ນດິນລີໄຮ-ນີໄຟ, ຫລື ວ່າຢູ່
ໃນເມືອງລີໄຮ-ນີໄຟ, ເພາະວ່າຜູ້ຄົນຂອງ
ເພິ່ນບໍ່ໄດ້ຍິນຂ່າວຄາວອັນໃດຈາກພວກ
ເຂົາເລີຍ ນັບຕັ້ງແຕ່ເວລາທີ່ພວກເຂົາໜີ
ຈາກ [ຂ]ເຊຣາເຮັມລາໄປ, ສະນັ້ນ, ຜູ້ຄົນ
ຂອງເພິ່ນຈຶ່ງເຮັດໃຫ້ເພິ່ນເມື່ອຍໃຈໃນ
ການລົບກວນຂອງພວກເຂົາ.
2 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ກະສັດໂມໄຊຢາໄດ້ໃຫ້ຊາຍສະກັນສິບຫົກ
ຄົນຂຶ້ນໄປຍັງແຜ່ນດິນລີໄຮ-ນີໄຟ ເພື່ອສືບ
ຖາມກ່ຽວກັບພີ່ນ້ອງຂອງຕົນ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ ພວກເຂົາເລີ່ມຂຶ້ນໄປໂດຍມີຄົນຜູ້
ໜຶ່ງຊື່ວ່າອຳໂມນໄປນຳ, ລາວເປັນຄົນແຂງ
ແຮງ ແລະ ມີພະລັງ ຊຶ່ງເປັນເຊື້ອສາຍຂອງ
ເຊຣາເຮັມລາ, ແລະ ລາວເປັນຫົວໜ້າຂອງ
ຄົນພວກນັ້ນ.
4 ແລະ ບັດນີ້, ພວກເຂົາບໍ່ຮູ້ຫົນທາງທີ່
ຈະໄປໃນຖິ່ນແຫ້ງແລ້ງກັນດານ ເພື່ອຈະ
ຂຶ້ນໄປຫາແຜ່ນດິນລີໄຮ-ນີໄຟ; ສະນັ້ນ,
ພວກເຂົາຈຶ່ງຊັດເຊພະເນຈອນໄປໃນຖິ່ນ
ແຫ້ງແລ້ງກັນດານເປັນເວລາສີ່ສິບມື້ທີ່
ພວກເຂົາໄດ້ໄປແບບນັ້ນ.
5 ເວລາທີ່ພວກເຂົາໄປແບບນັ້ນຢູ່ເປັນ
ເວລາສີ່ສິບມື້ ພວກເຂົາໄດ້ມາເຖິງເນີນພູ
ໜ່ວຍໜຶ່ງ ຊຶ່ງຢູ່ທາງເໜືອຂອງແຜ່ນດິນ
[ກ]ໄຊລຳ, ແລ້ວພວກເຂົາຈຶ່ງໄດ້ຕັ້ງຜ້າເຕັ້ນ
ຂຶ້ນຢູ່ທີ່ນັ້ນ.
6 ແລະ ອຳໂມນໄດ້ພາພີ່ນ້ອງຜູ້ທີ່ມານຳ
ລາວໄປນຳສາມຄົນ, ແລະ ຊື່ຂອງພວກ
ເຂົາຄື ອາມາລະໄຄ, ເຮເລັມ, ແລະ ເຮັມ,

4 ຂ 1 ນຟ 1:4.
7 ກ 2 ກຣທ 11:9.
7 1 ກ ອມນ 1:27–30.
ຂ ອມນ 1:13.
5 ກ ມຊຢ 9:6, 8, 14.

ແລະ ພວກ ເຂົາ ໄດ້ ລົງ ໄປ ຫາ ແຜ່ນ ດິນ
[ກ]ນີໄຟ.
7 ແລະ ຈົ່ງ ເບິ່ງ, ພວກ ເຂົາ ໄດ້ ພົບ ກັບ
ກະສັດຜູ້ປົກຄອງຜູ້ຄົນຢູ່ໃນແຜ່ນດິນນີໄຟ,
ແລະ ໃນແຜ່ນດິນໄຊລຳ; ແລະ ພວກເຂົາ
ຖືກທະຫານອາລັກຂາຂອງກະສັດລ້ອມ
ໄວ້, ແລະ ຖືກຈັບມັດສອກໄວ້ແລ້ວນຳເອົາ
ໄປເຂົ້າຄຸກ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຂົາຢູ່ໃນຄຸກໄດ້ສອງມື້ ພວກເຂົາກໍ
ຖືກນຳໄປຢູ່ຕໍ່ໜ້າກະສັດ ແລະ ເຊືອກມັດ
ພວກເຂົາໄດ້ຖືກແກ້ອອກ; ແລະ ພວກເຂົາ
ໄດ້ຢືນຢູ່ຕໍ່ໜ້າກະສັດ ແລະ ໄດ້ຮັບອະນຸ
ຍາດໃຫ້ຕອບຄຳຖາມ ຊຶ່ງກະສັດຈະຖາມ
ພວກເຂົາ.
9 ແລະ ເພິ່ນກ່າວກັບພວກເຂົາວ່າ: ຈົ່ງ
ເບິ່ງ, ເຮົາຄື [ກ]ລິມໄຮ, ລູກຊາຍຂອງໂນອາ,
ຜູ້ເປັນລູກຊາຍຂອງຊີນິບ, ຜູ້ຂຶ້ນມາຈາກ
ແຜ່ນດິນເຊຣາເຮັມລາ ເພື່ອຮັບເອົາແຜ່ນ
ດິນນີ້ມາເປັນມູນມໍລະດົກ ຊຶ່ງເປັນ ແຜ່ນ
ດິນຂອງບັນພະບຸລຸດຂອງພວກເຮົາ, ແລະ
ຖືກແຕ່ງຕັ້ງໃຫ້ເປັນກະສັດໂດຍສຽງຂອງຜູ້
ຄົນ.
10 ແລະ ບັດນີ້, ເຮົາປາດຖະໜາຢາກ
ຮູ້ວ່າເປັນດ້ວຍເຫດໃດພວກເຈົ້າຈຶ່ງບັງ
ອາດເຂົ້າມາໃກ້ກຳແພງເມືອງຕອນທີ່ເຮົາ
ກັບທະຫານອາລັກຂາຂອງເຮົາຢູ່ນອກກຳ
ແພງເມືອງ?
11 ແລະ ບັດນີ້ເຮົາຈະປ່ອຍໃຫ້ພວກ
ເຈົ້າມີຊີວິດຢູ່ເພາະວ່າເຮົາຈະໄດ້ສອບ
ສວນພວກເຈົ້າ, ຖ້າບໍ່ດັ່ງນັ້ນເຮົາກໍຄົງໃຫ້
ທະຫານຂອງເຮົາຂ້າພວກເຈົ້າເສຍແລ້ວ.
ພວກເຈົ້າຖືກອະນຸຍາດໃຫ້ເວົ້າ.
12 ແລະ ບັດນີ້, ອຳໂມນເຫັນວ່າລາວໄດ້
ຮັບອະນຸຍາດໃຫ້ເວົ້າແລ້ວ, ລາວຈຶ່ງອອກ
ໄປ ແລະ ກົ້ມຫົວລົງຕໍ່ໜ້າກະສັດ; ແລະ
ເວລາເງີຍໜ້າຂຶ້ນ ລາວກໍກ່າວວ່າ: ໂອ້
ກະສັດເອີຍ ຂ້ານ້ອຍຮູ້ສຶກຂອບພຣະໄທ
ຢູ່ຕໍ່ພຣະພັກຂອງພຣະເຈົ້າຢ່າງລົ້ນເຫລືອ
ທີ່ຍັງມີຊີວິດຢູ່, ແລະ ໄດ້ຮັບອະນຸຍາດໃຫ້
ເວົ້າ ແລະ ຂ້ານ້ອຍຈະພະຍາຍາມເວົ້າ
ດ້ວຍຄວາມອາດຫານ;
13 ເພາະວ່າຂ້ານ້ອຍໝັ້ນໃຈວ່າ ຖ້າຫາກ
ທ່ານຮູ້ຈັກຂ້ານ້ອຍ ທ່ານຄົງບໍ່ປ່ອຍໃຫ້ຂ້າ
ນ້ອຍຖືກມັດສອກຢູ່ແບບນີ້. ເພາະວ່າຂ້າ
ນ້ອຍຄືອຳໂມນ, ແລະ ເປັນເຊື້ອສາຍຂອງ
[ກ]ເຊຣາເຮັມລາ, ແລະ ຂຶ້ນມາຈາກແຜ່ນດິນ
ເຊຣາເຮັມລາ, ເພື່ອສອບຖາມຄວາມສຸກ
ທຸກຂອງພີ່ນ້ອງຂອງພວກເຮົາ, ຜູ້ຊຶ່ງຊີນິບ
ພາຂຶ້ນມາຈາກແຜ່ນດິນນັ້ນ.
14 ແລະ ບັດນີ້, ເຫດການໄດ້ບັງເກີດ
ຂຶ້ນຄື ຫລັງຈາກລິມໄຮໄດ້ຍິນຄຳເວົ້າຂອງ
ອຳໂມນແລ້ວ, ເພິ່ນກໍມີຄວາມຍິນດີຢ່າງ
ຍິ່ງ, ແລະ ເວົ້າວ່າ: ບັດນີ້, ເຮົາຮູ້ຈັກແນ່
ນອນແລ້ວວ່າພີ່ນ້ອງຂອງເຮົາຜູ້ຢູ່ໃນແຜ່ນ
ດິນເຊຣາເຮັມລາຍັງມີຊີວິດຢູ່. ແລະ ບັດນີ້
ເຮົາຈະປິຕິຍິນດີ; ແລະ ໃນມື້ອື່ນເຮົາຈະໃຫ້
ຜູ້ຄົນຂອງເຮົາປິຕິຍິນດີນຳອີກ.
15 ຈົ່ງເບິ່ງ, ພວກເຮົາໄດ້ເປັນທາດຂອງ
ຊາວເລມັນ, ແລະ ຖືກເກັບ [ກ]ພາສີດ້ວຍ
ອັດຕາສູງເກີນກວ່າຈະທົນໄດ້. ແລະ ບັດນີ້,
ຈົ່ງເບິ່ງພີ່ນ້ອງຂອງພວກເຮົາຈະປົດປ່ອຍ
ພວກເຮົາໃຫ້ພົ້ນຈາກຄວາມເປັນທາດ
ແລະ ພົ້ນຈາກກຳມືຂອງຊາວເລມັນ, ພວກ
ເຮົາຈະເປັນທາດຂອງຊາວນີໄຟດີກວ່າຈະ
ເສຍຊ່ວຍໃຫ້ແກ່ກະສັດຂອງຊາວເລມັນ.
16 ແລະ ບັດນີ້ກະສັດລິມໄຮໄດ້ສັ່ງທະ
ຫານອາລັກຂາຂອງເພິ່ນບໍ່ໃຫ້ຜູກສອກ

6 *ກ* 2 ນຟ 5:8.
9 *ກ* ມຊຢ 11:1.
13 *ກ* ອມນ 1:12–15.
15 *ກ* ມຊຢ 19:15.

ອຳໂມນກັບພີ່ນ້ອງຂອງລາວອີກຕໍ່ໄປ, ແຕ່
ໄດ້ສັ່ງໃຫ້ພວກທະຫານໄປຫາເນີນພູ ຊຶ່ງ
ຢູ່ທາງເໜືອຂອງເມືອງໄຊລຳ ເພື່ອນຳເອົາ
ພີ່ນ້ອງຄົນອື່ນໆຂອງລາວເຂົ້າມາໃນເມືອງ
ເພື່ອຈະໄດ້ກິນດື່ມ ແລະ ພັກຜ່ອນຈາກ
ການເດີນທາງຂອງພວກເຂົາ; ເພາະພວກ
ເຂົາໄດ້ທົນທຸກທໍລະມານຫລາຍ; ພວກ
ເຂົາໄດ້ທົນກັບຄວາມຫິວ, ຄວາມກະຫາຍ,
ແລະ ອິດເມື່ອຍ.
17 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ໃນມື້ຕໍ່ມາຄື ກະສັດລິມໄຮໄດ້ອອກປະກາດ
ໄປໃນບັນດາຜູ້ຄົນຂອງເພິ່ນທັງໝົດ, ເພື່ອ
ພວກເຂົາຈະໄດ້ມາເຕົ້າໂຮມກັນທີ່ [ກ]ພຣະ
ວິຫານ ເພື່ອໃຫ້ທຸກຄົນໄດ້ຍິນຄຳເວົ້າຂອງ
ເພິ່ນ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຄົນ ທັງ ຫລາຍ ໄດ້ ມາ ເຕົ້າ ໂຮມ ກັນ ແລ້ວ
ເພິ່ນ ຈຶ່ງ ໄດ້ ເວົ້າ ກັບ ພວກ ເຂົາ ຢ່າງ ຮອບ
ຄອບ, ມີຄວາມວ່າ: ໂອ້ ພວກທ່ານຜູ້ຄົນ
ຂອງຂ້າພະເຈົ້າ, ຈົ່ງເງີຍໜ້າຂຶ້ນ ແລະ ສະ
ບາຍໃຈເຖີດ; ເພາະຈົ່ງເບິ່ງ, ເວລາໃກ້ເຂົ້າ
ມາເຖິງແລ້ວ ຫລື ມັນຍັງຢູ່ບໍ່ໄກເທົ່າໃດທີ່
ພວກເຮົາຈະບໍ່ໄດ້ຢູ່ໃຕ້ອຳນາດຂອງສັດຕູ
ຂອງພວກເຮົາອີກຕໍ່ໄປ; ທັງໆທີ່ພວກເຮົາ
ດີ້ນຮົນຢ່າງບໍ່ໄດ້ຮັບຜົນມາຫລາຍເທື່ອ
ແລ້ວ; ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າຍັງ
ວາງໃຈວ່າພວກເຮົາຕ້ອງດີ້ນຮົນຕໍ່ໄປເພື່ອ
ຈະໄດ້ຮັບຜົນ.
19 ສະນັ້ນ, ຈົ່ງເງີຍໜ້າຂຶ້ນເຖີດ ແລະ ປິ
ຕິຍິນດີ ແລະ ໝັ້ນໃຈໃນ [ກ]ພຣະເຈົ້າ, ຊຶ່ງ
ໃນພຣະເຈົ້າອົງນັ້ນຜູ້ເປັນພຣະເຈົ້າຂອງ
ອັບຣາຮາມ, ແລະ ອີຊາກ, ແລະ ຢາໂຄບ,
ແລະ ພຣະເຈົ້າອົງນັ້ນແຫລະຜູ້ [ຂ]ນຳພາລູກ
ຫລານຂອງອິດສະຣາເອນອອກມາຈາກ
ແຜ່ນດິນເອຢິບ, ແລະ ຊ່ວຍໃຫ້ພວກເຂົາ
ຍ່າງຜ່ານທະເລແດງເທິງແຜ່ນດິນແຫ້ງ
ໄປ, ແລະ ລ້ຽງພວກເຂົາດ້ວຍ [ຄ]ມານາເພື່ອ
ພວກເຂົາຈະບໍ່ຕາຍຢູ່ໃນຖິ່ນແຫ້ງແລ້ງກັນ
ດານ; ແລະ ມີອີກຫລາຍສິ່ງຫລາຍຢ່າງທີ່
ພຣະອົງໄດ້ເຮັດເພື່ອພວກເຂົາ.
20 ແລະ ອີກເທື່ອໜຶ່ງ, ພຣະເຈົ້າອົງດຽວ
ກັນນັ້ນທີ່ໄດ້ນຳພາບັນພະບຸລຸດຂອງພວກ
ເຮົາ [ກ]ອອກຈາກແຜ່ນດິນເຢຣູຊາເລັມ
ແລະ ໄດ້ຮັກສາ ແລະ ປົກປ້ອງຜູ້ຄົນຂອງ
ພຣະອົງຈົນເຖິງປະຈຸບັນນີ້; ແລະ ຈົ່ງເບິ່ງ,
ເປັນເພາະຄວາມຊົ່ວຮ້າຍ ແລະ ຄວາມໜ້າ
ກຽດຊັງຂອງພວກເຮົາ ພຣະອົງຈຶ່ງພາພວກ
ເຮົາມາຫາຄວາມເປັນທາດ.
21 ແລະ ທ່ານທັງຫລາຍເປັນພະຍານ
ໃນມື້ນີ້, ວ່າຊີນິບ, ຜູ້ຖືກແຕ່ງຕັ້ງໃຫ້ເປັນ
ກະສັດປົກຄອງຜູ້ຄົນພວກນີ້, ແລະ ໂດຍ
ທີ່ເພິ່ນ [ກ]ມີໃຈຈົດຈໍ່ຢ່າງແຮງກ້າທີ່ຈະໄດ້
ຮັບແຜ່ນດິນຂອງບັນພະບຸລຸດຂອງເພິ່ນ
ມາເປັນມູນມໍລະດົກ, ສະນັ້ນ ເພິ່ນຈຶ່ງຖືກ
ຫລອກລວງໂດຍເລ່ຫລ່ຽມ ແລະ ກົນອຸ
ບາຍຂອງກະສັດເລມັນ ໃຫ້ເຂົ້າເຮັດຂໍ້ຕົກ
ລົງກັບກະສັດຊີນິບ, ແລະ ຍອມໃຫ້ພາກ
ສ່ວນໜຶ່ງຂອງແຜ່ນດິນຕົກຢູ່ໃນກຳມືຂອງ
ກະສັດເລມັນ ຈົນກະທັ້ງເມືອງລີໄຮ-ນີໄຟ,
ແລະ ເມືອງໄຊລຳ; ແລະ ແຜ່ນດິນອ້ອມ
ແອ້ມນັ້ນ—
22 ແລະ ທັງໝົດນີ້ກະສັດເລມັນໄດ້ເຮັດ
ໄປເພື່ອຈຸດປະສົງຢ່າງດຽວຄື [ກ]ນຳເອົາຜູ້
ຄົນພວກນີ້ມາຢູ່ພາຍໃຕ້ອຳນາດ ຫລື ມາ

17 *ກ* 2 ນຟ 5:16.
19 *ກ* ອພຍ 3:6;
1 ນຟ 19:10.
*ຂ* ອພຍ 12:40–41;
ແອວ 36:28.
*ຄ* ອພຍ 16:15, 35;
ຈບຊ 11:7–8;
ຢຊ 5:12.
20 *ກ* 1 ນຟ 2:1–4.
21 *ກ* ມຊຢ 9:1–3.
22 *ກ* ມຊຢ 10:18.

ເປັນທາດ. ແລະ ຈົ່ງເບິ່ງ, ໃນເວລານີ້ພວກ
ເຮົາ ໄດ້ ເສຍ ຊ່ວຍ ໃຫ້ ກະສັດ ຂອງ ຊາວ
ເລມັນເປັນຈຳນວນເຄິ່ງໜຶ່ງຂອງເຂົ້າສາລີ
ກັບເຂົ້າບາເລ, ແລະ ຈົນກະທັ້ງພືດພັນທັງ
ໝົດຂອງພວກເຮົາທຸກຊະນິດ, ແລະ ເຄິ່ງ
ໜຶ່ງຂອງຈຳນວນສັດລ້ຽງທີ່ເພີ່ມຂຶ້ນຂອງ
ພວກເຮົາ ແລະ ຝູງສັດທີ່ໃຊ້ລາກແກ່ຂອງ
ພວກເຮົາ; ແລະ ກະສັດຂອງຊາວເລມັນໄດ້
ຮຽກຮ້ອງເອົາຈາກພວກເຮົາຈົນກະທັ້ງເຄິ່ງ
ໜຶ່ງຂອງສິ່ງຂອງທີ່ພວກເຮົາມີ ຫລື ເປັນ
ເຈົ້າຂອງ, ຖ້າບໍ່ດັ່ງນັ້ນພວກເຂົາກໍຈະຂ້າ
ພວກເຮົາຖິ້ມ.
23 ແລະ ບັດນີ້, ນີ້ບໍ່ແມ່ນເປັນສິ່ງເຫລືອ
ທີ່ຈະທົນໄດ້ບໍ? ແລະ ນີ້ບໍ່ແມ່ນຄວາມທຸກ
ຢ່າງສາຫັດຂອງພວກເຮົາບໍ? ແລະ ບັດນີ້
ຈົ່ງເບິ່ງ, ພວກເຮົາບໍ່ມີເຫດຜົນອັນໃດທີ່ຈະ
ເປັນທຸກແບບນີ້ເລີຍ.
24 ແທ້ ຈິງ ແລ້ວ, ຂ້າພະ ເຈົ້າ ເວົ້າ ກັບ
ພວກທ່ານວ່າ ມັນມີເຫດຜົນຫລາຍຢ່າງທີ່
ພວກເຮົາຈະເປັນທຸກຢູ່ໃນຂະນະນີ້; ເພາະ
ຈົ່ງເບິ່ງ ພີ່ນ້ອງຂອງພວກເຮົາຖືກຂ້າຕາຍ
ມາຫລາຍປານໃດແລ້ວ ແລະ ເລືອດຂອງ
ພວກເຂົາຫລັ່ງໄຫລໂດຍບໍ່ມີປະໂຫຍດ,
ແລະ ທັງໝົດນີ້ເປັນເພາະຄວາມຊົ່ວຮ້າຍ
ສາມານ.
25 ເພາະຖ້າຫາກຜູ້ຄົນພວກນີ້ບໍ່ຕົກຢູ່
ໃນການລ່ວງລະເມີດແລ້ວ ພຣະເຈົ້າຈະບໍ່
ປ່ອຍໃຫ້ຄວາມຊົ່ວອັນໃຫຍ່ຫລວງນີ້ເກີດ
ກັບພວກເຂົາດອກ. ແຕ່ຈົ່ງເບິ່ງ, ພວກເຂົາ
ບໍ່ຍອມເຊື່ອຟັງພຣະຄຳຂອງພຣະອົງ; ມີ
ແຕ່ຂັດແຍ້ງກັນ ຊຶ່ງເກີດຂຶ້ນໃນບັນດາພວກ
ເຂົາ, ຈົນເຖິງຂະໜາດທີ່ພວກເຂົາຕ້ອງຂ້າ
ຟັນກັນໃນບັນດາພັກພວກຕົນເອງ.
26 ແລະ [ກ]ສາດສະດາຜູ້ໜຶ່ງຂອງພຣະ
ເຈົ້າກໍຖືກພວກເຂົາຂ້າຕາຍໄປ; ແທ້ຈິງ
ແລ້ວ, ເພິ່ນເປັນຄົນທີ່ພຣະເຈົ້າເລືອກໄວ້,
ຜູ້ຊຶ່ງໄດ້ບອກພວກເຂົາເຖິງຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງພວກເຂົາ
ແລະ ທຳນາຍຫລາຍສິ່ງຫລາຍຢ່າງທີ່ຈະ
ມາເຖິງ, ແທ້ຈິງແລ້ວ, ຈົນກະທັ້ງການສະ
ເດັດມາຂອງພຣະຄຣິດ.
27 ເພາະຍ້ອນວ່າເພິ່ນໄດ້ເວົ້າກັບພວກ
ເຂົາວ່າ ພຣະຄຣິດຄື [ກ]ພຣະເຈົ້າ, ພຣະ
ບິດາຂອງທຸກສິ່ງທຸກຢ່າງ, ແລະ ໄດ້ເວົ້າ
ວ່າພຣະອົງຈະຮັບເອົາຮູບລັກສະນະຂອງ
ມະນຸດ ແລະ ຈະເປັນ [ຂ]ຮູບລັກສະນະຕາມ
ທີ່ມະນຸດຖືກສ້າງຂຶ້ນແຕ່ຕອນຕົ້ນ; ຫລື ອີກ
ຄຳໜຶ່ງ, ເພິ່ນເວົ້າວ່າ ມະນຸດຖືກສ້າງຂຶ້ນ
ຕາມຮູບລັກສະນະຂອງ [ຄ]ພຣະເຈົ້າ, ແລະ
ວ່າພຣະເຈົ້າຈະສະເດັດລົງມາໃນບັນດາ
ລູກຫລານມະນຸດ ແລະ ຈະຮັບເອົາເນື້ອ
ໜັງ ແລະ ໂລຫິດຂອງມະນຸດ, ແລະ ຈະສະ
ເດັດອອກໄປຕາມພື້ນແຜ່ນດິນໂລກ—
28 ແລະ ບັດນີ້ເປັນຍ້ອນເພິ່ນເວົ້າເລື່ອງ
ເຫລົ່ານີ້ ພວກເຂົາຈຶ່ງໄດ້ຂ້າເພິ່ນເສຍ;
ແລະ ພວກເຂົາໄດ້ກະທຳຫລາຍສິ່ງຫລາຍ
ຢ່າງເພື່ອນຳເອົາພຣະພິໂລດຂອງພຣະ
ເຈົ້າມາຫາພວກເຂົາ. ສະນັ້ນ, ມີຜູ້ໃດແດ່
ທີ່ແປກໃຈວ່າ ເປັນຫຍັງພວກເຂົາຈຶ່ງຕົກຢູ່
ໃນຄວາມເປັນທາດ, ແລະ ທີ່ຖືກລົງໂທດ
ດ້ວຍຄວາມທຸກຢ່າງແສນສາຫັດແບບນີ້.
29 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້
ກ່າວວ່າ: ເຮົາຈະບໍ່ [ກ]ຊ່ວຍເຫລືອຜູ້ຄົນຂອງ
ເຮົາໃນວັນແຫ່ງການລ່ວງລະເມີດຂອງ
ພວກເຂົາ; ແຕ່ເຮົາຈະລ້ອມຮົ້ວເສັ້ນທາງ
ຂອງພວກເຂົາໄວ້ ເພື່ອພວກເຂົາຈະບໍ່ຈະ

26 *ກ* ມຊຢ 17:12–20.
27 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* ປຖກ 1:26–28; ອທ 3:14–17; ຄພ 20:17–18.
*ຄ* ມຊຢ 13:33–34; 15:1–4.
29 *ກ* 1 ຊມອ 12:15; 2 ຂຄ 24:20.

ເລີນຮຸ່ງເຮືອງ; ແລະ ການກະທຳຂອງພວກ
ເຂົາເຫລົ່ານີ້ຈະເປັນຄືກັນກັບຕໍທີ່ໃຫ້ພວກ
ເຂົາສະດຸດ ເພື່ອ ສຳ ນຶກ ເ ຖິງ ໜ້າ ທີ່ ຂ ອງ
ພວກເຂົາ.
30 ແລະ ອີກຢ່າງໜຶ່ງ, ພຣະອົງກ່າວວ່າ:
ຖ້າຫາກຜູ້ຄົນຂອງເຮົາຫວ່ານ [ກ]ຄວາມສົກ
ກະປົກ ແລ້ວ ພວກ ເຂົາ ຈະ [ຂ]ເກັບກ່ຽວຂີ້
ແກບຂອງມັນໃນລົມບ້າໝູ; ແລະ ໝາກຜົນ
ຂອງມັນຈະເປັນຄືຢາພິດ.
31 ແລະ ອີກຢ່າງໜຶ່ງ ພຣະອົງກ່າວວ່າ:
ຖ້າ ຫາ ກ ຜູ້ ຄົນ ຂ ອ ງ ເຮົາ ຈະ ຫວ່ານ ຄ ວາ ມ
ສົກກະປົກຂອງພວກເຂົາ ແລະ ຈະເກັບ
ກ່ຽວມັນແລ້ວ [ກ]ລົມຕາເວັນອອກຈະນຳເອົາ
ຄວາມພິນາດມາທັນທີ.
32 ແລະ ບັດນີ້, ຈົ່ງເບິ່ງຄຳສັນຍາຂອງ
ພຣະຜູ້ເປັນເຈົ້າສຳເລັດແລ້ວ, ແລະ ພວກ
ເຂົາຖືກລົງໂທດ ແລະ ເປັນທຸກແລ້ວ.
33 ແຕ່ຖ້າຫາກພວກທ່ານຈະ [ກ]ຫັນໜ້າ
ມາຫາພຣະຜູ້ເປັນເຈົ້າດ້ວຍຈຸດປະສົງເຕັມ
ທີ່ ແຫ່ງ ໃຈ, ແລະ ວາງຄວາມ ໄວ້ວາງ ໃຈ
ຂອງພວກທ່ານໃນພຣະອົງ, ແລະ ຮັບໃຊ້
ພຣະອົງດ້ວຍຄວາມພາກພຽນ ແຫ່ງຈິດ
ໃຈ, ຖ້າຫາກພວກທ່ານເຮັດສິ່ງເຫລົ່ານີ້,
ແລ້ວພຣະອົງຈະປົດປ່ອຍພວກທ່ານ ໃຫ້
ພົ້ນຈາກຄວາມເປັນທາດຕາມພຣະປະສົງ
ແລະ ຄວາມພໍພຣະໄທຂອງພຣະອົງ.

## ບົດທີ 8

*ອຳໂມນສິດສອນຜູ້ຄົນຂອງລິມໄຮ—ລາວໄດ້ຮູ້ເຖິງແຜ່ນຈາລຶກຊາວສີ່ແຜ່ນຂອງຊາວຢາເຣັດ—ບັນທຶກສະໄໝບູຮານສາມາດແປໄດ້ໂດຍຜູ້ພະຍາກອນເທົ່ານັ້ນ—ບໍ່ມີຂອງປະທານໃດເໜືອກວ່າຂອງປະທານແຫ່ງການເປັນຜູ້ພະຍາກອນ. ປະມານ 121 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກກະສັດລິມໄຮເວົ້າກັບຜູ້ຄົນຂອງເພິ່ນ
ຈົບ ແລ້ວ ຊຶ່ງເພິ່ນໄດ້ເວົ້າກັບ ພວກ ເຂົາ
ຫລາຍ ເລື່ອງ ແຕ່ຂ້າພະເຈົ້າຂຽນໄວ້ພຽງ
ເລັກໜ້ອຍເທົ່ານັ້ນໃນໜັງສືເຫລັ້ມນີ້, ເພິ່ນ
ໄດ້ ບອກ ຜູ້ ຄົນ ຂອງ ເພິ່ນ ທຸກ ສິ່ງທຸກຢ່າງ
ກ່ຽວກັບພີ່ນ້ອງຂອງພວກເຂົາຜູ້ທີ່ຢູ່ໃນ
ແຜ່ນດິນເຊຣາເຮັມລາ.
2 ແລະ ເພິ່ນໄດ້ໃຫ້ອຳໂມນຢືນຂຶ້ນຕໍ່ໜ້າ
ຝູງຊົນ, ແລະ ເລົ່າເລື່ອງທັງໝົດທີ່ເກີດຂຶ້ນ
ກັບພີ່ນ້ອງຂອງພວກເຂົາ ນັບຕັ້ງແຕ່ເວລາ
ທີ່ຊີນິບໜີຈາກແຜ່ນດິນນັ້ນ ຈົນເຖິງເວລາ
ທີ່ຕົວລາວເອງຂຶ້ນມາຈາກແຜ່ນດິນນັ້ນໃຫ້
ພວກເຂົາຟັງ.
3 ແລະ ລາວໄດ້ເລົ່າໃຫ້ພວກເຂົາຟັງເຖິງ
ຄຳສຸດທ້າຍ ຊຶ່ງກະສັດເບັນຢາມິນໄດ້ສິດ
ສອນຄົນພວກນັ້ນນຳອີກ, ແລະ ໄດ້ອະທິ
ບາຍຂໍ້ຄວາມແກ່ຜູ້ຄົນຂອງກະສັດລິມໄຮ
ເພື່ອພວກເຂົາຈະໄດ້ເຂົ້າໃຈເຖິງຂໍ້ຄວາມ
ທັງໝົດທີ່ລາວໄດ້ເວົ້າໄປ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກ ລາວ ເຮັດ ທຸກ ສິ່ງ ນີ້ແລ້ວ, ກະສັດ
ລິມໄຮໄດ້ໃຫ້ຝູງຊົນເລີກລາກັນໄປ, ແລະ
ໃຫ້ທຸກຄົນກັບບ້ານເຮືອນຂອງໃຜລາວ.
5 ແລະ ເຫດ ການ ໄດ້ບັງເກີດຂຶ້ນຄື
ກະສັດລິມໄຮໄດ້ນຳເອົາ [ກ]ແຜ່ນຈາລຶກມາ
ຢູ່ ຕໍ່ ໜ້າ ອຳ ໂມນ ຊຶ່ງ ມີ ບັນທຶກຂອງຜູ້ຄົນ
ຂອງເພິ່ນນັບຕັ້ງແຕ່ເວລາທີ່ພວກເຂົາໜີ
ມາຈາກແຜ່ນດິນເຊຣາເຮັມລາ ເພື່ອລາວ

30 *ກ* ຄມພ ສົກກະປົກ, ຄວາມສົກກະປົກ.
*ຂ* ຄລຕ 6:7–8; ຄພ 6:33. ຄມພ ເກັບກ່ຽວ.
31 *ກ* ຢມຢ 18:17; ມຊຢ 12:6.
33 *ກ* ມມ 9:6.
**8** 5 *ກ* ມຊຢ 9–22.

ຈະໄດ້ອ່ານຂໍ້ຄວາມທີ່ບັນທຶກຢູ່ໃນນັ້ນ.
6 ບັດນີ້, ທັນທີທີ່ອຳໂມນໄດ້ອ່ານບັນທຶກ
ຈົບ ແລ້ວ, ກະສັດກໍຢາກຮູ້ວ່າລາວຮູ້ຈັກ
ແປຄວາມໝາຍຂອງພາສານັ້ນບໍ່, ແລະ
ອຳໂມນບອກເພິ່ນວ່າລາວແປບໍ່ໄດ້.
7 ແລະ ກະສັດໄດ້ເວົ້າກັບລາວວ່າ: ໂດຍ
ທີ່ໂສກເສົ້າຫລາຍເພາະຄວາມທຸກຂອງ
ຜູ້ຄົນຂອງເຮົາ, ເຮົາຈຶ່ງໄດ້ສັ່ງໃຫ້ຄົນຂອງ
ເຮົາສີ່ສິບສາມຄົນອອກເດີນທາງໄປໃນ
ຖິ່ນແຫ້ງແລ້ງກັນດານ ເພື່ອອອກໄປຊອກ
ຫາແຜ່ນດິນເຊຣາເຮັມລາ, ເພື່ອພວກເຮົາ
ຈະໄດ້ວິງວອນພີ່ນ້ອງຂອງພວກເຮົາໃຫ້ມາ
ປົດປ່ອຍພວກເຮົາອອກຈາກຄວາມເປັນ
ທາດນີ້.
8 ແລະ ພວກເຂົາໄດ້ຫລົງທາງຢູ່ໃນຖິ່ນ
ແຫ້ງ ແລ້ງກັນດານເປັນ ເວລາ ຫລາຍ ມື້,
ເຖິງຢ່າງໃດກໍຕາມ ພວກເຂົາຍັງມີຄວາມ
ພາກພຽນ, ແລະ ພວກເຂົາບໍ່ໄດ້ພົບພໍ້ແຜ່ນ
ດິນເຊຣາເຮັມລາເລີຍ ແຕ່ໄດ້ກັບຄືນມາ
ຫາແຜ່ນດິນນີ້, ໂດຍທີ່ໄດ້ເດີນທາງໄປໃນ
ແຜ່ນດິນແຫ່ງໜຶ່ງຢູ່ລະຫວ່າງແມ່ນ້ຳຫລາຍ
ສາຍ, ຄົ້ນພົບ ແຜ່ນດິນ ແຫ່ງໜຶ່ງຊຶ່ງເຕັມ
ໄປດ້ວຍຊາກກະດູກຄົນ, ແລະ ສັດ, ແລະ
ເຕັມໄປດ້ວຍຊາກເຮືອນຊານທຸກຊະນິດທີ່
ເພພັງນຳອີກ, ຄົ້ນພົບແຜ່ນດິນແຫ່ງໜຶ່ງທີ່
ເຄີຍມີຜູ້ຄົນເປັນຈຳນວນຫລວງຫລາຍອາ
ໄສຢູ່ດັ່ງຝູງຊົນຂອງອິດສະຣາເອນ.
9 ແລະ ເພື່ອໃຫ້ເປັນປະຈັກພະຍານເຖິງ
ເລື່ອງນີ້ວ່າມັນເປັນຄວາມຈິງ ພວກເຂົາໄດ້
ນຳເອົາແຜ່ນຈາລຶກ [ກ]ຊາວສີ່ແຜ່ນຊຶ່ງເຕັມ
ໄປດ້ວຍຕົວອັກຂະລະມານຳ, ແລະ ມັນ
ເຮັດດ້ວຍຄຳສົດ.
10 ແລະ ຈົ່ງເບິ່ງ, ພວກເຂົາໄດ້ເອົາ
[ກ]ແຜ່ນປົກເອິກມານຳອີກ, ມັນໃຫຍ່ ແລະ
ເຮັດດ້ວຍ [ຂ]ທອງເຫລືອງ, ແລະ ທອງແດງ,
ແລະ ຢູ່ໃນສະພາບດີ.
11 ແລະ ອີກຢ່າງໜຶ່ງ, ພວກເຂົາໄດ້ນຳ
ເອົາດາບທີ່ບໍ່ມີດ້າມ, ແລະ ໃບຂອງມັນເຂົ້າ
ຂີ້ໝ້ຽງມານຳ, ແລະ ບໍ່ມີຜູ້ໃດເລີຍໃນແຜ່ນ
ດິນທີ່ສາມາດແປພາສາທີ່ຖືກສະຫລັກໄວ້
ໃນແຜ່ນຈາລຶກນັ້ນ. ສະນັ້ນ ເຮົາຈຶ່ງເວົ້າກັບ
ເຈົ້າວ່າ: ເຈົ້າແປມັນໄດ້ບໍ?
12 ແລະ ເຮົາກ່າວກັບເຈົ້າອີກວ່າ: ເຈົ້າ
ຮູ້ຈັກຜູ້ໃດບໍທີ່ແປໄດ້? ເພາະວ່າເຮົາປາດ
ຖະໜາທີ່ຈະໃຫ້ແປບັນທຶກນີ້ເປັນພາສາ
ຂອງພວກເຮົາ; ເພາະບາງທີມັນອາດຈະ
ໃຫ້ຄວາມຮູ້ແກ່ພວກເຮົາເຖິງຄົນສ່ວນໜຶ່ງ
ທີ່ເຫລືອຢູ່ຈາກພວກທີ່ຖືກທຳລາຍໄປ, ຊຶ່ງ
ເປັນທີ່ມາຂອງບັນທຶກເຫລົ່ານີ້; ຫລື ບາງທີ
ມັນອາດຈະໃຫ້ຄວາມຮູ້ແກ່ພວກເຮົາເຖິງ
ການທຳລາຍຂອງຄົນພວກນີ້; ແລະ ເຮົາ
ປາດຖະໜາຢາກຮູ້ຈັກເຫດຜົນແຫ່ງຄວາມ
ພິນາດຂອງພວກເຂົາ.
13 ບັດນີ້ອຳໂມນກ່າວກັບເພິ່ນວ່າ: ໂອ້
ກະສັດເອີຍ ຂ້ານ້ອຍບອກທ່ານໄດ້ຢ່າງແນ່
ນອນ ເພາະຂ້ານ້ອຍຮູ້ຈັກຊາຍຜູ້ໜຶ່ງທີ່ຈະ
[ກ]ແປບັນທຶກນີ້ໄດ້, ເພາະຄວາມຮູ້ທີ່ເພິ່ນມີ;
ເພິ່ນສາມາດແປບັນທຶກຂອງສະໄໝບູຮານ
ນີ້ໄດ້ທັງໝົດ; ແລະ ສິ່ງເຫລົ່ານີ້ແມ່ນຂອງ
ປະທານຈາກພຣະເຈົ້າ. ແລະ ມັນເອີ້ນວ່າ
[ຂ]ສິ່ງແປຄວາມໝາຍ ແລະ ບໍ່ມີຜູ້ໃດສາ
ມາດສ່ອງເບິ່ງໃນນັ້ນໄດ້ນອກຈາກຈະໄດ້
ຮັບພຣະບັນຊາເສຍກ່ອນ, ຖ້າຜູ້ໃດສ່ອງ
ເບິ່ງໂດຍການລ່ວງລະເມີດ ຜູ້ນັ້ນຈະຕ້ອງ
ຕາຍ. ແລະ ຜູ້ໃດກໍຕາມທີ່ຮັບບັນຊາໃຫ້
ສ່ອງເບິ່ງ ກໍເອີ້ນຜູ້ນັ້ນວ່າ [ຄ]ຜູ້ພະຍາກອນ.
14 ແລະ ຈົ່ງເບິ່ງ, ກະສັດຂອງຜູ້ຄົນຊຶ່ງຢູ່
ໃນແຜ່ນດິນເຊຣາເຮັມລາເປັນຜູ້ທີ່ໄດ້ຮັບ

9 ກ ອທ 1:1–2.
10 ກ ອທ 15:15.
ຂ ອທ 10:23.
13 ກ ມຊຍ 28:10–17.
ຂ ຄມພ ອູລີມ ແລະ ທູມມີມ.
ຄ ຄມພ ຜູ້ພະຍາກອນ.

ບັນຊາໃຫ້ເຮັດສິ່ງເຫລົ່ານີ້, ແລະ ເປັນຜູ້ທີ່
ມີຂອງປະທານອັນສູງສົ່ງຈາກພຣະເຈົ້າ.
15 ແລະ ກະສັດເວົ້າວ່າ ຜູ້ພະຍາກອນ
ນັ້ນຍິ່ງໃຫຍ່ກວ່າສາດສະດາ.
16 ແລະ ອຳໂມນເວົ້າວ່າຜູ້ພະຍາກອນ
ເປັນຜູ້ເປີດເຜີຍ ແລະ ເປັນສາດສະດານຳ
ອີກ; ແລະ ບໍ່ມີຜູ້ໃດຈະມີຂອງປະທານທີ່
ຍິ່ງໃຫຍ່ກວ່ານີ້ໄດ້ເວັ້ນເສຍແຕ່ເຂົາຈະມີ
ອຳນາດຂອງພຣະເຈົ້າ ຊຶ່ງບໍ່ມີຜູ້ໃດຈະມີ
ໄດ້; ເຖິງປານນັ້ນມະນຸດອາດມີອຳນາດອັນ
ຍິ່ງໃຫຍ່ທີ່ພຣະເຈົ້າປະທານໃຫ້ເຂົາ.
17 ແຕ່ຜູ້ພະຍາກອນຈະຮູ້ຈັກເຖິງສິ່ງທີ່
ຜ່ານມາ ແລະ ເຖິງສິ່ງທີ່ຈະມາເຖິງນຳອີກ,
ແລະ ໂດຍຜ່ານສິ່ງເຫລົ່ານັ້ນທຸກສິ່ງຈະຖືກ
ສະແດງໃຫ້ປະຈັກ, ຫລື ທີ່ຈິງແລ້ວສິ່ງລີ້
ລັບຈະຖືກສະແດງໃຫ້ປະຈັກ, ແລະ ສິ່ງທີ່
ຊ້ອນຢູ່ກໍຈະມາຢູ່ໃນບ່ອນແຈ້ງ, ແລະ ສິ່ງທີ່
ຍັງບໍ່ເປັນທີ່ຮູ້ຈັກກໍຈະຖືກເຮັດໃຫ້ເປັນທີ່ຮູ້
ຈັກໂດຍຜ່ານສິ່ງເຫລົ່ານັ້ນ, ແລະ ສິ່ງທີ່ຈະ
ຮູ້ຈັກບໍ່ໄດ້ ບໍ່ວ່າໃນທາງໃດ ໂດຍຜ່ານສິ່ງ
ເຫລົ່ານັ້ນກໍຈະເຮັດໃຫ້ເປັນທີ່ຮູ້ຈັກນຳ.
18 ພຣະເຈົ້າໄດ້ຈັດຫາວິທີໄວ້ດັ່ງນີ້ເພື່ອ
ມະນຸດຈະໄດ້ເຮັດການອັນຍິ່ງໃຫຍ່ ແລະ
ສິ່ງມະຫັດສະຈັນດ້ວຍສັດທາ; ສະນັ້ນເຂົາ
ຈຶ່ງກັບເປັນປະໂຫຍດອັນຍິ່ງໃຫຍ່ຕໍ່ເພື່ອນ
ມະນຸດດ້ວຍກັນ.
19 ແລະ ບັດນີ້ເມື່ອອຳໂມນເວົ້າຂໍ້ຄວາມ
ຈົບລົງແລ້ວ ກະສັດກໍປິຕິຍິນດີຢ່າງຍິ່ງ
ແລະ ຖວາຍຄວາມຂອບພຣະຄຸນແດ່ພຣະ
ເຈົ້າ, ໂດຍກ່າວວ່າ: ຄວາມລຶກລັບ [ກ]ອັນ
ຍິ່ງໃຫຍ່ມີຢູ່ໃນແຜ່ນຈາລຶກເຫລົ່ານີ້ຢ່າງ
ບໍ່ຕ້ອງສົງໃສ, ແລະ ສິ່ງແປຄວາມໝາຍ
ເຫລົ່ານີ້ຖືກຕຽມໄວ້ດ້ວຍຈຸດປະສົງທີ່ຈະ
ເປີດເຜີຍຄວາມລຶກລັບເຊັ່ນນີ້ທັງໝົດຕໍ່ລູກ
ຫລານມະນຸດຢ່າງບໍ່ຕ້ອງສົງໃສ.
20 ໂອ້ ວຽກງານຂອງພຣະຜູ້ເປັນເຈົ້າ
ໜ້າອັດສະຈັນໃຈພຽງໃດ, ແລະ ພຣະອົງ
ທົນກັບຜູ້ຄົນຂອງພຣະອົງມານານພຽງໃດ;
ແທ້ຈິງແລ້ວ, ລູກຫລານມະນຸດຕາບອດ
ແລະ ຍາກທີ່ຈະເຂົ້າໃຈພຽງໃດ; ເພາະ
ພວກເຂົາບໍ່ສະແຫວງຫາປັນຍາ ແລະ ບໍ່
ປາດຖະໜາໃຫ້ [ກ]ປັນຍາຄວບຄຸມພວກເຂົາ
ເລີຍ!
21 ແທ້ຈິງແລ້ວ, ພວກເຂົາເປັນຄືກັນກັບ
ຝູງແກະປ່າຊຶ່ງໜີຈາກຜູ້ລ້ຽງ, ແລະ ກະຈັດ
ກະຈາຍໄປ, ແລະ ສັດໃນປ່າໄລ່ກິນ.

---

ບັນທຶກຂອງຊີນິບ—ເລື່ອງລາວຂອງຜູ້ຄົນ
ຂອງລາວນັບຕັ້ງແຕ່ເວລາທີ່ພວກເຂົາໜີ
ຈາກແຜ່ນດິນເຊຣາເຮັມລາ ມາຈົນເຖິງ
ເວລາທີ່ພວກເຂົາໄດ້ຮັບການປົດປ່ອຍໃຫ້
ພົ້ນຈາກກຳມືຂອງຊາວເລມັນ.

*ມີຢູ່ໃນບົດທີ 9 ຈົນເຖິງບົດທີ 22.*

## ບົດທີ 9

*ຊີນິບ ນຳພາຄົນກຸ່ມໜຶ່ງອອກຈາກເຊຣາເຮັມລາເພື່ອໄປຍຶດເອົາແຜ່ນດິນລີໄຮ-ນີໄຟ—ກະສັດຊາວເລມັນອະນຸຍາດໃຫ້ພວກເຂົາເປັນເຈົ້າຂອງແຜ່ນດິນອັນເປັນມູນມໍລະດົກ—ມັນໄດ້ມີສົງຄາມລະຫວ່າງຊາວເລມັນກັບຜູ້ຄົນຂອງຊີນິບ. ປະມານ 200–187 ປີ ກ່ອນ ຄ.ສ.*

1 ຂ້າພະເຈົ້າຊີນິບ ໂດຍທີ່ໄດ້ຮັບການ
ສິດສອນໃນພາສາທັງໝົດຂອງຊາວນີໄຟ,
ແລະ ມີຄວາມຮູ້ເຖິງ [ກ]ແຜ່ນດິນນີໄຟ, ຫລື

19 *ກ* ອທ 3:21–28; 4:4–5.
20 *ກ* ສພສ 9:1;
ມທ 11:19.
**9** 1 *ກ* 2 ນຟ 5:5–8;
ອມນ 1:12.

ແຜ່ນ ດິນ ຊຶ່ງ ເປັນ ມູນ ມໍລະ ດົກ ຕັ້ງ ແຕ່ ຕົ້ນ
ຂອງບັນ ພະ ບຸ ລຸດ ຂອງ ພວກ ເຮົາ, ແລະ
ຂ້າພະ ເຈົ້າ ໄດ້ ຖືກສົ່ງ ມາ ໃຫ້ ເປັນຜູ້ສອດ
ແນມເພື່ອຈະໄດ້ສືບເບິ່ງກອງທັບຂອງຊາວ
ເລມັນ, ເພື່ອວ່າກອງທັບຂອງພວກເຮົາຈະ
ໄດ້ມາ ໂຈມຕີ ແລະ ທຳລາຍ ພວກ ເຂົາ—
ແຕ່ເມື່ອຂ້າພະ ເຈົ້າມາ ເຫັນສິ່ງທີ່ດີໃນບັນ
ດາພວກເຂົາແລ້ວ ຂ້າພະ ເຈົ້າບໍ່ປາດຖະ
ໜາທີ່ຈະໃຫ້ພວກເຂົາຖືກທຳລາຍເລີຍ.
2 ສະນັ້ນ, ຂ້າພະ ເຈົ້າຈຶ່ງໄດ້ໂຕ້ຖຽງກັບ
ພວກພີ່ນ້ອງຂອງຂ້າພະເຈົ້າຢູ່ໃນຖິ່ນແຫ້ງ
ແລ້ງກັນດານ, ເພາະວ່າຂ້າພະ ເຈົ້າຢາກ
ໃຫ້ຫົວໜ້າຂອງພວກ ເຮົາ ເຮັດຂໍ້ຕົກລົງ
ກັບພວກເຂົາ; ແຕ່ວ່າເພິ່ນເປັນຄົນເຄັ່ງຄັດ
ແລະ ກະຫາຍ ເລືອດ ຈຶ່ງສັ່ງ ໃຫ້ປະຫານ
ຂ້າພະເຈົ້າເສຍ; ແຕ່ຂ້າພະເຈົ້າກໍຖືກຊ່ວຍ
ຊີວິດໄວ້ ໂດຍມີການນອງເລືອດຢ່າງໜັກ;
ແລະ ມີການຕໍ່ສູ້ກັນ ລະຫວ່າງ ພໍ່ກັບພໍ່,
ແລະ ອ້າຍກັບອ້າຍ, ນ້ອງກັບນ້ອງ, ຈົນວ່າ
ກອງທັບສ່ວນໃຫຍ່ຂອງພວກເຮົາຖືກທຳ
ລາຍໃນຖິ່ນແຫ້ງແລ້ງກັນດານ; ແລະ ພວກ
ທີ່ເຫລືອຕາຍກໍໄດ້ກັບຄືນໄປຫາແຜ່ນດິນ
ເຊຣາເຮັມລາ ເພື່ອເລົ່າເລື່ອງໃຫ້ເມຍຂອງ
ເຂົາ ແລະ ລູກຂອງເຂົາຟັງ.
3 ແລະ ເຖິງຢ່າງໃດກໍຕາມ, ໂດຍທີ່ຂ້າ
ພະເຈົ້າມີຄວາມຕັ້ງໃຈເກີນໄປທີ່ຈະໄດ້ຮັບ
ແຜ່ນດິນຂອງບັນພະບຸລຸດຂອງພວກເຮົາ
ມາເປັນມູນມໍລະດົກ, ຂ້າພະເຈົ້າຈຶ່ງຮວບ
ຮວມຜູ້ຄົນເປັນຈຳນວນຫລວງຫລາຍ ຜູ້
ທີ່ປາດຖະໜາທີ່ຈະຂຶ້ນໄປເປັນເຈົ້າຂອງ
ແຜ່ນດິນ; ແລະ ໄດ້ເລີ່ມອອກເດີນທາງໄປ
ໃນຖິ່ນແຫ້ງແລ້ງກັນດານອີກ ເພື່ອຂຶ້ນໄປ
ຫາແຜ່ນດິນນັ້ນ; ແຕ່ພວກເຮົາຖືກລົງໂທດ
ດ້ວຍຄວາມອຶດຢາກ ແລະ ຄວາມທຸກຢ່າງ
ແສນສາຫັດ; ເພາະວ່າພວກເຮົາລະນຶກ
ເຖິງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຮົາຊ້າເກີນໄປ.
4 ເຖິງຢ່າງໃດກໍຕາມ, ຫລັງຈາກພວກ
ເຮົາໄດ້ຊັດເຊພະເນຈອນຢູ່ໃນຖິ່ນແຫ້ງ
ແລ້ງກັນດານເປັນເວລາຫລາຍມື້ ພວກ
ເຮົາໄດ້ຕັ້ງຜ້າເຕັ້ນຂຶ້ນ ຊຶ່ງເປັນບ່ອນພີ່
ນ້ອງຂອງພວກເຮົາຖືກຂ້າຕາຍ, ຊຶ່ງຢູ່ໃກ້
ກັບແຜ່ນດິນຂອງບັນພະບຸລຸດຂອງພວກ
ເຮົາ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ພາສີ່ຄົນເຂົ້າໄປໃນເມືອງອີກ,
ເຂົ້າໄປຫາກະສັດ, ເພື່ອຂ້າພະເຈົ້າຈະໄດ້
ຮູ້ໃຈຂອງກະສັດ, ແລະ ເພື່ອຂ້າພະເຈົ້າຈະ
ໄດ້ຮູ້ວ່າ ຂ້າພະເຈົ້າພ້ອມດ້ວຍຜູ້ຄົນຂອງ
ຂ້າພະເຈົ້າຈະໄດ້ເຂົ້າໄປເປັນເຈົ້າຂອງ
ແຜ່ນດິນໂດຍສັນຕິຫລືບໍ່.
6 ແລະ ຂ້າພະເຈົ້າໄດ້ອ້ອນວອນກະສັດ,
ແລະ ເພິ່ນໄດ້ເຮັດພັນທະສັນຍາກັບຂ້າພະ
ເຈົ້າວ່າ ຂ້າພະເຈົ້າສາມາດເປັນເຈົ້າຂອງ
ແຜ່ນດິນລີໄຮ-ນີໄຟ, ແລະ ແຜ່ນດິນໄຊລຳ
ໄດ້.
7 ແລະ ເພິ່ນໄດ້ສັ່ງໃຫ້ຜູ້ຄົນຂອງເພິ່ນ
ອອກຈາກແຜ່ນດິນນັ້ນໄປ, ແລະ ຂ້າພະ
ເຈົ້າກັບຜູ້ຄົນຂອງຂ້າພະເຈົ້າຈຶ່ງໄດ້ເຂົ້າໄປ
ໃນແຜ່ນດິນນັ້ນເພື່ອເປັນເຈົ້າຂອງ.
8 ແລະ ພວກເຮົາເລີ່ມສ້າງອາຄານ ແລະ
ສ້ອມແຊມກຳແພງເມືອງ, ແທ້ຈິງແລ້ວ,
ແມ່ນກຳແພງເມືອງລີໄຮ-ນີໄຟ, ແລະ ກຳ
ແພງເມືອງໄຊລຳ.
9 ແລະ ພວກເຮົາເລີ່ມໄຖດິນ, ແທ້ຈິງ
ແລ້ວ, ເພື່ອປູກເມັດພືດພັນທຸກຊະນິດ, ມີ
ເມັດເຂົ້າສາລີ, ແລະ ເຂົ້າຫວີດ, ແລະ ເຂົ້າ
ບາເລ, ແລະ ນີອາດ, ແລະ ຊີອຳ, ແລະ
ແນວໝາກໄມ້ຫລາຍຊະນິດ; ແລະ ພວກ
ເຮົາເລີ່ມມີຄົນເພີ່ມທະວີຂຶ້ນ ແລະ ໄດ້ຮຸ່ງ
ເຮືອງຢູ່ໃນແຜ່ນດິນນັ້ນ.
10 ບັດນີ້ມັນເປັນເລ່ຫລ່ຽມ ແລະ ກົນອຸ

ບາຍຂອງກະສັດເລມັນທີ່ຈະ [ກ]ເອົາຜູ້ຄົນ ຂອງຂ້າພະເຈົ້າໄປເປັນທາດ, ທີ່ເພິ່ນໄດ້ ຍອມເສຍແຜ່ນດິນໃຫ້ພວກເຮົາເປັນເຈົ້າ ຂອງ.

11 ສະນັ້ນ ເຫດການໄດ້ບັງເກີດຂຶ້ນຄື, ຫລັງ ຈາກພວກເຮົາໄດ້ອາໄສຢູ່ໃນແຜ່ນ ດິນນັ້ນເປັນເວລາສິບສອງປີ ກະສັດເລມັນ ເລີ່ມບໍ່ສະບາຍໃຈຂຶ້ນ, ຢ້ານວ່າໂດຍວິທີໃດ ວິທີໜຶ່ງຜູ້ຄົນຂອງຂ້າພະເຈົ້າຈະເຂັ້ມແຂງ ຫລາຍຂຶ້ນໃນແຜ່ນດິນ, ແລະວ່າພວກເຂົາ ຈະບໍ່ສາມາດຊະນະ ແລະ ນຳເອົາພວກ ເຮົາໄປເປັນທາດໄດ້.

12 ເພາະພວກເຂົາເປັນຄົນ [ກ]ຂີ້ຄ້ານ ແລະ ນັບຖືຮູບບູຊາ; ສະນັ້ນ, ພວກເຂົາ ຈຶ່ງປາດຖະໜາທີ່ຈະເອົາພວກເຮົາໄປເປັນ ທາດ ເພື່ອພວກເຂົາຈະໄດ້ອີ່ມໜຳສຳລານ ດ້ວຍແຮງງານຈາກມືຂອງພວກເຮົາ; ແທ້ ຈິງແລ້ວ, ເພື່ອພວກເຂົາຈະໄດ້ລ້ຽງສະ ຫລອງກັນດ້ວຍຝູງສັດຢູ່ໃນທົ່ງຂອງພວກ ເຮົາ.

13 ສະນັ້ນ, ເຫດການໄດ້ບັງເກີດຂຶ້ນຄື ກະສັດເລມັນເລີ່ມຍຸຍົງຜູ້ຄົນຂອງເພິ່ນໃຫ້ ຜິດຖຽງກັບຜູ້ຄົນຂອງຂ້າພະເຈົ້າ; ສະນັ້ນ ສົງຄາມ ແລະ ການຂັດແຍ້ງຈຶ່ງເລີ່ມຂຶ້ນໃນ ແຜ່ນດິນ.

14 ເພາະໃນປີທີສິບສາມແຫ່ງການປົກ ຄອງຂອງຂ້າພະເຈົ້າ ໃນ ແຜ່ນດິນນີໄຟ, ຫ່າງອອກໄປທາງໃຕ້ຂອງແຜ່ນດິນໄຊລຳ, ເວລາທີ່ຜູ້ຄົນຂອງຂ້າພະເຈົ້າກຳລັງຕັກນ້ຳ ແລະ ໃຫ້ອາຫານແກ່ຝູງສັດ, ແລະ ກຳລັງ ໄຖດິນຂອງພວກເຂົາຢູ່ນັ້ນ, ທະຫານຊາວ ເລມັນເປັນຈຳນວນຫລວງຫລາຍໄດ້ມາ ໂຈມຕີ, ແລະ ເລີ່ມຕົ້ນຂ້າພວກເຂົາ, ແລະ ຍຶດເອົາຝູງສັດ ແລະ ເຂົ້າສາລີຢູ່ໃນທົ່ງ ຂອງພວກເຂົາໄປ.

15 ແທ້ຈິງແລ້ວ, ແລະ ເຫດການໄດ້ບັງ ເກີດຂຶ້ນຄື ຜູ້ທີ່ບໍ່ໄດ້ຖືກຈັບຈຶ່ງປົບໜີເຂົ້າ ໄປໃນເມືອງນີໄຟ, ແລະ ຮ້ອງຂໍຄວາມຊ່ວຍ ເຫລືອຈາກຂ້າພະເຈົ້າ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ ພະເຈົ້າໄດ້ມອບອາວຸດໃຫ້ພວກເຂົາ, ຊຶ່ງມີ ຄັນທະນູ, ແລະ ລູກທະນູ, ດາບ, ແລະ ດາບ ສອງຄົມ, ແລະ ໄມ້ຄ້ອນໜ້າບ່ອງ, ແລະ ກະຖຸນ, ແລະ ອາວຸດທຸກຊະນິດທີ່ພວກເຮົາ ໄດ້ປະດິດຂຶ້ນມາ, ແລະ ຂ້າພະເຈົ້າພ້ອມ ດ້ວຍຜູ້ຄົນຂອງຂ້າພະເຈົ້າໄດ້ອອກໄປຕໍ່ສູ້ ກັບຊາວເລມັນ.

17 ແທ້ຈິງແລ້ວ, ໂດຍໄດ້ຮັບກຳລັງຈາກ ພຣະຜູ້ເປັນເຈົ້າ ພວກເຮົາຈຶ່ງໄດ້ອອກໄປ ຕໍ່ສູ້ກັບຊາວເລມັນ; ເພາະວ່າຂ້າພະເຈົ້າ ແລະ ຜູ້ຄົນຂອງຂ້າພະເຈົ້າໄດ້ຮ້ອງທູນຕໍ່ ພຣະຜູ້ເປັນເຈົ້າດ້ວຍສຸດກຳລັງຂໍໃຫ້ພຣະ ອົງປົດປ່ອຍພວກເຮົາໃຫ້ພົ້ນຈາກກຳມື ຂອງສັດຕູ, ເພາະວ່າພວກເຮົາໄດ້ຖືກປຸກ ໃຫ້ຕື່ນຂຶ້ນຫາຄວາມຊົງຈຳເຖິງການປົດ ປ່ອຍບັນພະບຸລຸດຂອງພວກເຮົາ.

18 ແລະ ພຣະເຈົ້າ [ກ]ໄດ້ຍິນສຽງຮ້ອງ ຂອງພວກເຮົາ; ແລະ ໄດ້ຕອບຄຳອະທິ ຖານຂອງພວກເຮົາ; ແລະ ພວກເຮົາໄດ້ ອອກໄປດ້ວຍພະລັງຂອງພຣະອົງ; ແທ້ຈິງ ແລ້ວ, ພວກເຮົາໄດ້ອອກໄປສູ້ຮົບກັບຊາວ ເລມັນ, ແລະ ພາຍໃນມື້ໜຶ່ງຄືນໜຶ່ງ, ພວກ ເຮົາໄດ້ຂ້າພວກເຂົາຕາຍສາມພັນສີ່ສິບ ສາມຄົນ; ພວກເຮົາໄດ້ຂ້າຕໍ່ໄປຈົນໄດ້ຂັບ ໄລ່ພວກເຂົາໜີອອກຈາກແຜ່ນດິນຂອງ ພວກເຮົາ.

19 ແລະ ຂ້າພະເຈົ້າ, ຕົວຂ້າພະເຈົ້າ ເອງ, ໄດ້ຊ່ວຍຝັງສົບພວກເຂົາດ້ວຍມືຂອງ

10 ກ ມຊຍ 7:21–22.
12 ກ ອນ 1:20.
ຄມພ ການນັບຖືຮູບບູຊາ.
18 ກ ມຊຍ 29:20.

ຂ້າພະເຈົ້າ. ແຕ່ຈົ່ງເບິ່ງ, ມັນເປັນການໂສກ
ເສົ້າ ແລະ ຄ່ຳຄວນຢ່າງໃຫຍ່ຫລວງຕໍ່ພວກ
ເຮົາ ເພາະພີ່ນ້ອງຂອງພວກເຮົາສອງຮ້ອຍ
ເຈັດສິບເກົ້າຄົນໄດ້ຖືກຂ້າຕາຍໃນການສູ້
ຮົບນັ້ນ.

## ບົດທີ 10

*ກະສັດເລມັນໄດ້ເສຍຊີວິດໄປ—ຜູ້ຄົນຂອງເພິ່ນເປັນຄົນປ່າເຖື່ອນ ແລະ ໂຫດຮ້າຍ ແລະ ເຊື່ອຖືໃນປະເພນີທີ່ບໍ່ຖືກຕ້ອງ—ຊີນິບກັບຜູ້ຄົນຂອງເພິ່ນເດັ່ນກວ່າພວກເຂົາ. ປະມານ 187–160 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ເລີ່ມສະຖາປະນາລາຊາອານາຈັກ
ຂຶ້ນ ແລະ ພວກເຮົາເລີ່ມເປັນເຈົ້າຂອງແຜ່ນ
ດິນຢ່າງສັນຕິສຸກອີກ. ແລະ ຂ້າພະເຈົ້າໃຫ້
ສ້າງອາວຸດແຫ່ງສົງຄາມຂຶ້ນຫລາຍຊະນິດ,
ເພື່ອຂ້າພະເຈົ້າຈະໄດ້ມີອາວຸດໃຫ້ແກ່ຜູ້ຄົນ
ເພື່ອຕໍ່ສູ້ໃນເວລາທີ່ຊາວເລມັນຂຶ້ນມາກໍ່ສົງ
ຄາມກັບຜູ້ຄົນຂອງຂ້າພະເຈົ້າ.
2 ແລະ ຂ້າພະເຈົ້າໄດ້ຈັດຍາມໄວ້ຮອບ
ແຜ່ນດິນ ເພື່ອຊາວເລມັນຈະບໍ່ໄດ້ມາໂຈມ
ຕີ ແລະ ມາທຳລາຍພວກເຮົາໂດຍບໍ່ຮູ້ສຶກ
ຕົວ; ແລະ ໃນວິທີນີ້ຂ້າພະເຈົ້າຈຶ່ງໄດ້ປ້ອງ
ກັນຜູ້ຄົນຂອງຂ້າພະເຈົ້າ ແລະ ຝູງສັດລ້ຽງ
ຂອງຂ້າພະເຈົ້າ, ແລະ ຮັກສາມັນໄວ້ບໍ່ໃຫ້
ຕົກໄປຢູ່ໃນກຳມືຂອງສັດຕູຂອງພວກເຮົາ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ແຜ່ນດິນຂອງບັນພະບຸລຸດຂອງ
ພວກເຮົາມາເປັນມູນມໍລະດົກຢູ່ຫລາຍປີ,
ແທ້ຈິງແລ້ວ, ເປັນເວລາເຖິງຊາວສອງປີ.
4 ແລະ ຂ້າພະເຈົ້າໄດ້ໃຫ້ພວກຜູ້ຊາຍໄຖ
ດິນ, ແລະ ປູກ [ກ]ພືດພັນ ແລະ ແນວໝາກ
ໄມ້ທຸກຊະນິດ.
5 ແລະ ຂ້າພະເຈົ້າໄດ້ໃຫ້ພວກຜູ້ຍິງເຂັນ
ຝ້າຍ ແລະ ເຮັດວຽກຢ່າງດຸໝັ່ນ, ແລະ ຕ່ຳ
ຜ້າລີນິນຢ່າງດີທຸກຊະນິດ, ແທ້ຈິງແລ້ວ, ຕ່ຳ
[ກ]ຜ້າທຸກຊະນິດເພື່ອພວກເຮົາຈະໄດ້ຫຸ້ມ
ຫໍ່ຄວາມເປືອຍເປົ່າຂອງພວກເຮົາ; ແລະ
ພວກເຮົາໄດ້ຮຸ່ງເຮືອງຢູ່ໃນແຜ່ນດິນ—
ແລະ ພວກເຮົາໄດ້ມີສັນຕິສຸກຢູ່ໃນແຜ່ນດິນ
ນັ້ນຕິດຕໍ່ກັນເປັນເວລາຊາວສອງປີ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກະສັດ [ກ]ເລມັນໄດ້ສິ້ນຊີວິດ, ແລະ ລູກຊາຍ
ຂອງເພິ່ນໄດ້ຂຶ້ນປົກຄອງແທນ. ແລະ ເພິ່ນ
ເລີ່ມຍຸຍົງຜູ້ຄົນຂອງເພິ່ນໃຫ້ເກີດມີການ
ກະບົດຂຶ້ນຕໍ່ຜູ້ຄົນຂອງຂ້າພະເຈົ້າ; ສະນັ້ນ
ພວກເຂົາຈຶ່ງເລີ່ມຕຽມການສູ້ຮົບ ແລະ ຂຶ້ນ
ມາຕໍ່ສູ້ກັບຜູ້ຄົນຂອງຂ້າພະເຈົ້າ.
7 ແຕ່ຂ້າພະເຈົ້າໄດ້ສົ່ງພວກນັກສືບສອດ
ແນມຂອງຂ້າພະເຈົ້າອອກໄປຮອບແຜ່ນ
ດິນ [ກ]ເຊັມລອນ, ເພື່ອຂ້າພະເຈົ້າຈະໄດ້ຮູ້
ການຕຽມພ້ອມຂອງພວກເຂົາ, ເພື່ອຂ້າພະ
ເຈົ້າຈະໄດ້ປ້ອງກັນຕ້ານທານພວກເຂົາ,
ເພື່ອພວກເຂົາຈະບໍ່ໄດ້ມາໂຈມຕີ ແລະ ທຳ
ລາຍຜູ້ຄົນຂອງຂ້າພະເຈົ້າ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາຍົກທັບຂຶ້ນມາທາງເໜືອຂອງແຜ່ນດິນ
ໄຊລຳ, ດ້ວຍກອງທະຫານເປັນຈຳນວນ
ຫລວງຫລາຍປະກອບດ້ວຍ [ກ]ອາວຸດ, [ຂ]ທະ
ນູ, ແລະ ລູກທະນູ, ແລະ ດາບ, ແລະ ດາບ
ສອງຄົມ, ແລະ ກ້ອນຫີນ, ແລະ ກະຖຸນ;
ແລະ ພວກເຂົາແຖຫົວ ແລະ ເປືອຍກາຍ ມີ
ແຕ່ແຜ່ນໜັງຄຽນແອວຂອງພວກເຂົາເທົ່າ
ນັ້ນ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຊື່ອງພວກຜູ້ຍິງກັບເດັກນ້ອຍ

**10** 4 *ກ* ມຊຢ 9:9.
5 *ກ* ແອວ 1:29.
6 *ກ* ມຊຢ 9:10–11; 24:3.
7 *ກ* ມຊຢ 11:12.
8 *ກ* ຈຣ 1:8.
*ຂ* ແອວ 3:4–5.

ຂອງຜູ້ຄົນຂອງຂ້າພະເຈົ້າໄວ້ໃນຖິ່ນແຫ້ງ
ແລ້ງກັນດານ; ແລະ ຂ້າພະເຈົ້າໄດ້ມອບອາ
ວຸດໃຫ້ພວກຜູ້ຊາຍແກ່ ແລະ ຊາຍສະກັນ,
ແລະ ທັງໝົດທີ່ສາມາດໃຊ້ອາວຸດໄດ້ໃຫ້
ມາເຕົ້າໂຮມກັນເພື່ອໄປຕໍ່ສູ້ກັບຊາວເລມັນ;
ແລະ ຂ້າພະເຈົ້າໃຫ້ຊັ້ນແກ່ເຂົາ, ແຕ່ລະ
ຄົນຕາມອາຍຸຂອງໃຜລາວ.

10 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ຂຶ້ນໄປຕໍ່ສູ້ກັບຊາວເລມັນ;
ແລະ ຂ້າພະເຈົ້າເຖິງວ່າຈະມີອາຍຸຫລາຍ
ແລ້ວ, ແຕ່ກໍຍັງໄດ້ຂຶ້ນໄປຕໍ່ສູ້ກັບຊາວ
ເລມັນ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ຂຶ້ນໄປຕໍ່ສູ້ດ້ວຍ [ກ]ພະລັງຂອງ
ພຣະຜູ້ເປັນເຈົ້າ.

11 ບັດນີ້, ຊາວເລມັນບໍ່ຮູ້ຈັກຫຍັງກ່ຽວ
ກັບພຣະຜູ້ເປັນເຈົ້າເລີຍ, ຫລື ບໍ່ຮູ້ຈັກຫຍັງ
ກ່ຽວກັບພະລັງຂອງພຣະຜູ້ເປັນເຈົ້າເລີຍ,
ສະນັ້ນ ພວກເຂົາຈຶ່ງອາໄສແຕ່ກຳລັງຂອງ
ຕົນເອງ. ເຖິງຢ່າງໃດກໍຕາມພວກເຂົາກໍ
ແຂງແຮງຕາມກຳລັງຂອງມະນຸດ.

12 ພວກເຂົາເປັນຄົນ [ກ]ປ່າເຖື່ອນ, ໂຫດ
ຮ້າຍ ແລະ ກະຫາຍເລືອດ, ເຊື່ອຖືໃນ [ຂ]ຮີດ
ຄອງປະເພນີຂອງບັນພະບຸລຸດຂອງພວກ
ເຂົາຄືແນວນີ້—ພວກເຂົາຖືກໄລ່ອອກຈາກ
ແຜ່ນດິນເຢຣູຊາເລັມ ເພາະຄວາມຊົ່ວຮ້າຍ
ຂອງບັນພະບຸລຸດຂອງພວກເຂົາ, ແລະ ຖືກ
ພີ່ນ້ອງຂອງພວກເຂົາໃສ່ຮ້າຍປ້າຍສີໃນ
ຖິ່ນແຫ້ງແລ້ງກັນດານ, ແລະ ຖືກໃສ່ຮ້າຍ
ປ້າຍສີເວລາທີ່ຂ້າມນ້ຳທະເລນຳອີກ;

13 ແລະ ອີກເທື່ອໜຶ່ງ, ວ່າພວກເຂົາຖືກ
ໃສ່ຮ້າຍປ້າຍສີເວລາທີ່ຢູ່ໃນແຜ່ນດິນຊຶ່ງ
ເປັນມູນມໍລະດົກແຫ່ງ [ກ]ທຳອິດຂອງພວກ
ເຂົາ, ຫລັງຈາກຂ້າມນ້ຳທະເລມາແລ້ວ,
ແລະ ທັງໝົດນີ້ເປັນເພາະນີໄຟເປັນຄົນຊື່
ສັດກວ່າໃນການຮັກສາພຣະບັນຍັດຂອງ
ພຣະຜູ້ເປັນເຈົ້າ—ສະນັ້ນ ເພິ່ນຈຶ່ງເປັນຄົນ
ທີ່ພຣະຜູ້ເປັນເຈົ້າ [ຂ]ໂປດປານ ແລະ ພຣະ
ຜູ້ເປັນເຈົ້າໄດ້ຍິນຄຳອະທິຖານຂອງເພິ່ນ
ແລະ ຕອບເພິ່ນ, ແລະ ເພິ່ນຈຶ່ງໄດ້ນຳພາ
ການເດີນທາງຂອງພວກເຂົາ ໄປໃນຖິ່ນ
ແຫ້ງແລ້ງກັນດານ.

14 ແລະ ພວກອ້າຍຂອງເພິ່ນຮ້າຍໃຫ້
ເພິ່ນ ເພາະພວກເຂົາບໍ່ [ກ]ເຂົ້າໃຈວິທີການ
ຂອງພຣະຜູ້ເປັນເຈົ້າ; ແລະ ພວກເຂົາ
[ຂ]ຮ້າຍໃຫ້ເພິ່ນເວລາທີ່ຢູ່ໃນຜືນນ້ຳ ເພາະ
ພວກເຂົາເຮັດໃຈແຂງກະດ້າງຕໍ່ພຣະຜູ້
ເປັນເຈົ້າ.

15 ແລະ ອີກຢ່າງໜຶ່ງ, ພວກເຂົາຮ້າຍໃຫ້
ເພິ່ນໃນເວລາມາເຖິງແຜ່ນດິນແຫ່ງຄຳສັນ
ຍາ, ພວກເຂົາຫາວ່າເພິ່ນໄດ້ເອົາອຳນາດ
[ກ]ປົກຄອງຜູ້ຄົນໄປຈາກມືຂອງພວກເຂົາ;
ແລະ ພວກເຂົາພະຍາຍາມທີ່ຈະຂ້າເພິ່ນ
ເສຍ.

16 ແລະ ອີກຢ່າງໜຶ່ງ, ພວກເຂົາໄດ້ຮ້າຍ
ໃຫ້ເພິ່ນ ເພາະວ່າເພິ່ນໄດ້ອອກໄປໃນຖິ່ນ
ແຫ້ງແລ້ງກັນດານ ຕາມທີ່ພຣະຜູ້ເປັນເຈົ້າ
ໄດ້ບັນຊາເພິ່ນ, ແລະ ນຳເອົາ [ກ]ແຜ່ນຈາລຶກ
ຊຶ່ງມີຂຽນໄວ້ໃນແຜ່ນຈາລຶກທອງເຫລືອງ
ໄປນຳ, ເພາະພວກເຂົາກ່າວວ່າ ເພິ່ນ [ຂ]ລັກ
ແຜ່ນຈາລຶກຂອງພວກເຂົາໄປ.

17 ແລະ ພວກເຂົາໄດ້ສິດສອນລູກ
ຫລານຂອງພວກເຂົາໃຫ້ກຽດຊັງຊາວນີໄຟ
ແນວນັ້ນ, ແລະ ໃຫ້ຂ້າ, ໃຫ້ລັກ ແລະ ໃຫ້
ປຸ້ນພວກເຂົາ, ແລະ ເຮັດທຸກຢ່າງທີ່ເຮັດ

10 *ກ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
12 *ກ* ແອວ 17:14.
*ຂ* 2 ນຟ 5:1–3.
13 *ກ* 1 ນຟ 18:23.
*ຂ* 1 ນຟ 17:35.
14 *ກ* 1 ນຟ 15:7–11.
*ຂ* 1 ນຟ 18:10–11.
15 *ກ* 2 ນຟ 5:3.
16 *ກ* 2 ນຟ 5:12.
*ຂ* ແອວ 20:10, 13.

ໄດ້ເພື່ອທຳລາຍພວກເຂົາ; ສະນັ້ນ, ຊາວ
ເລມັນ ຈຶ່ງມີຄວາມກຽດຊັງອັນບໍ່ມີວັນສິ້ນ
ສຸດຕໍ່ລູກຫລານຂອງນີໄຟ.
18 ເພາະດ້ວຍເຫດນີ້ ກະສັດເລມັນຈຶ່ງ
ຫລອກລວງຂ້າພະເຈົ້າດ້ວຍເລ່ຫລ່ຽມ
ແລະ ກົນອຸບາຍຂີ້ຕົວະຂອງເພິ່ນ, ແລະ
ເຮັດຄຳໝັ້ນສັນຍາທີ່ຈົບງາມ, ເພື່ອໃຫ້ຂ້າ
ພະເຈົ້ານຳເອົາຜູ້ຄົນຂອງຂ້າພະເຈົ້າຂຶ້ນ
ມາຫາແຜ່ນດິນນີ້, ເພື່ອພວກເຂົາຈະໄດ້ທຳ
ລາຍພວກເຮົາ; ແທ້ຈິງແລ້ວ, ພວກເຮົາໄດ້
ຮັບຄວາມທຸກທໍລະມານຢູ່ໃນແຜ່ນດິນນີ້
ມາຫລາຍປີແລ້ວ.
19 ແລະ ບັດນີ້, ຂ້າພະເຈົ້າຊີນິບ ຫລັງ
ຈາກເລົ່າເລື່ອງທັງໝົດກ່ຽວກັບຊາວເລມັນ
ໃຫ້ຜູ້ຄົນຂອງຂ້າພະເຈົ້າຟັງແລ້ວ, ຂ້າພະ
ເຈົ້າໄດ້ຊຸກຍູ້ຈິດໃຈພວກເຂົາໃຫ້ໄປສູ້ຮົບ
ດ້ວຍພະລັງຂອງພວກເຂົາ ໂດຍໄວ້ວາງໃຈ
ໃນພຣະຜູ້ເປັນເຈົ້າ; ສະນັ້ນ, ພວກເຮົາຈຶ່ງ
ໄດ້ໄປຕໍ່ສູ້ກັບພວກເຂົາໜ້າຕໍ່ໜ້າ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ຂັບໄລ່ພວກເຂົາອອກຈາກ
ແຜ່ນດິນຂອງພວກເຮົາ; ແລະ ພວກເຮົາ
ໄດ້ຂ້າພວກເຂົາດ້ວຍການຂ້າອັນຍິ່ງໃຫຍ່
ຈົນກະທັ້ງພວກເຮົາບໍ່ສາມາດນັບໄດ້.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ກັບຄືນໄປຫາແຜ່ນດິນຂອງ
ພວກເຮົາ, ແລະ ຜູ້ຄົນຂອງຂ້າພະເຈົ້າເລີ່ມ
ລ້ຽງສັດ, ແລະ ໄຖດິນອີກ.
22 ແລະ ບັດນີ້ຂ້າພະເຈົ້າມີອາຍຸແກ່
ຫລາຍແລ້ວ, ຂ້າພະເຈົ້າຈຶ່ງໄດ້ມອບອານາ
ຈັກໃຫ້ແກ່ລູກຊາຍຜູ້ໜຶ່ງຂອງຂ້າພະເຈົ້າ;
ສະນັ້ນ ຂ້າພະເຈົ້າຈະບໍ່ກ່າວຕື່ມອີກ. ແລະ
ຂໍໃຫ້ພຣະຜູ້ເປັນເຈົ້າຈົ່ງໂປດປະທານ
ພອນໃຫ້ແກ່ຜູ້ຄົນຂອງຂ້າພະເຈົ້າດ້ວຍ
ເທີ້ນ. ອາແມນ.

## ບົດທີ 11

*ກະສັດ ໂນອາ ປົກຄອງດ້ວຍຄວາມຊົ່ວ
ຮ້າຍ—ເພິ່ນຫາຄວາມສຳລານໃນການດຳ
ລົງຊີວິດກັບມະເຫສີ ແລະ ນາງສະໜົມທັງ
ຫລາຍ—ອະບີນາໄດທຳນາຍວ່າຜູ້ຄົນຈະ
ຖືກນຳເອົາໄປເປັນທາດ—ກະສັດໂນອາ
ພະຍາຍາມຈະເອົາຊີວິດຂອງເພິ່ນ. ປະ
ມານ 160–150 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຊີນິບໄດ້ມອບລາຊາອານາຈັກໃຫ້ແກ່
ລູກຊາຍຜູ້ໜຶ່ງຂອງເພິ່ນຊື່ ໂນອາ; ສະນັ້ນ,
ໂນອາຈຶ່ງເລີ່ມປົກຄອງແທນ; ແລະ ເພິ່ນບໍ່
ໄດ້ເດີນໃນເສັ້ນທາງຂອງບິດາຂອງເພິ່ນ.
2 ເພາະຈົ່ງເບິ່ງ, ເພິ່ນບໍ່ໄດ້ຮັກສາພຣະ
ບັນຍັດຂອງພຣະເຈົ້າ, ແຕ່ເພິ່ນໄດ້ເດີນ
ຕາມຄວາມປາດຖະໜາຂອງໃຈຕົນ. ແລະ
ເພິ່ນມີມະເຫສີກັບ [ກ]ນາງສະໜົມຫລາຍ
ຄົນ. ແລະ ເພິ່ນໄດ້ [ຂ]ເປັນເຫດໃຫ້ຜູ້ຄົນຂອງ
ເພິ່ນກະທຳບາບ ແລະ ເຮັດສິ່ງທີ່ໜ້າກຽດ
ຊັງຕໍ່ສາຍພຣະເນດຂອງພຣະຜູ້ເປັນເຈົ້າ.
ແທ້ຈິງແລ້ວ, ແລະ ພວກເຂົາໄດ້ທຳ [ຄ]ການ
ໂສເພນີ ແລະ ຄວາມຊົ່ວຮ້າຍທຸກຢ່າງ.
3 ແລະ ເພິ່ນເກັບພາສີໜຶ່ງສ່ວນຫ້າຂອງ
ທຸກຢ່າງທີ່ຜູ້ຄົນເປັນເຈົ້າຂອງ, ໜຶ່ງສ່ວນ
ຫ້າຂອງຄຳຂອງພວກເຂົາ ແລະ ເງິນຂອງ
ພວກເຂົາ, ແລະ ໜຶ່ງສ່ວນຫ້າຂອງ [ກ]ໂລ
ຫະຂອງພວກເຂົາ, ແລະ ທອງແດງຂອງ
ພວກເຂົາ, ແລະ ທອງເຫລືອງຂອງພວກ
ເຂົາ ແລະ ເຫລັກຂອງພວກເຂົາ; ແລະ ໜຶ່ງ

**11** 2 *ກ* ຢຄ 3:5.
*ຂ* 1 ກສ 14:15–16; ມຊຢ 29:31.
*ຄ* 2 ນຟ 28:15.
3 *ກ* ເຮັບເຣີ ຄຳທີ່ກ່ຽວຂ້ອງກັນ: ຄຳຄຸນນາມ, "ເຫລື້ອມ"; ຄຳກິລິຍາ, "ວາງທັບ ຫລື ໂອບດ້ວຍໂລຫະ."

ສ່ວນຫ້າຂອງສັດລ້ຽງຂອງພວກເຂົາ; ແລະ
ໜຶ່ງສ່ວນຫ້າຂອງພືດພັນທັນຍາຫານຂອງ
ພວກເຂົາ.
4 ແລະ ທັງໝົດນີ້ນຳໄປເພື່ອຄ້ຳຊູຕົນ
ເອງ ແລະ ພວກມະເຫສີຂອງເພິ່ນກັບພວກ
ນາງສະໜົມທັງໝົດຂອງເພິ່ນ; ພ້ອມດ້ວຍ
ພວກປະໂລຫິດຂອງເພິ່ນ ແລະ ເມຍຂອງ
ພວກເຂົາກັບນາງບຳເລີຂອງພວກເຂົາ;
ເພິ່ນໄດ້ປ່ຽນແຜນຂອງການງານໃນອານາ
ຈັກຢ່າງນີ້.
5 ເພາະວ່າເພິ່ນໄດ້ປົດພວກປະໂລຫິດ
ເກົ່າທັງໝົດທີ່ບິດາຂອງເພິ່ນແຕ່ງຕັ້ງໄວ້,
ແລະ ໄດ້ແຕ່ງຕັ້ງຜູ້ໃໝ່ຂຶ້ນແທນ, ຊຶ່ງຄົນ
ເຫລົ່ານັ້ນມີຄວາມລະເມີເພີ້ຝັນດ້ວຍຄວາມ
ທະນົງໃຈ.
6 ແທ້ຈິງແລ້ວ, ພວກນີ້ໄດ້ຮັບການຄ້ຳ
ຈູນຢູ່ໃນຄວາມກຽດຄ້ານຂອງພວກເຂົາຢູ່
ດັ່ງນັ້ນ, ແລະ ໃນການນັບຖືຮູບບູຊາຂອງ
ພວກເຂົາ, ແລະ ໃນການທຳການໂສເພນີ
ຂອງພວກເຂົາ, ໂດຍພາສີຊຶ່ງກະສັດໂນອາ
ເກັບມາຈາກຜູ້ຄົນຂອງຕົນ; ຜູ້ຄົນໄດ້ທຳ
ງານໜັກທີ່ສຸດດັ່ງນັ້ນເພື່ອຄ້ຳຈູນຄວາມຊົ່ວ
ຮ້າຍ.
7 ແທ້ຈິງແລ້ວ, ແລະ ພວກເຂົາກໍນັບ
ຖືຮູບບູຊາຄືກັນ, ເພາະວ່າພວກເຂົາໄດ້
ຖືກຫລອກລວງດ້ວຍຄຳເວົ້າທີ່ບໍ່ເປັນປະ
ໂຫຍດ ແລະ ຄຳຍົກຍ້ອງຂອງກະສັດກັບ
ພວກປະໂລຫິດ ເພາະພວກເຂົາໄດ້ເວົ້າ
ເລື່ອງຍົກຍ້ອງກັບຜູ້ຄົນ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດ
ໂນອາໄດ້ສ້າງອາຄານຫລູຫລາ ແລະ ກວ້າງ
ໃຫຍ່ຫລາຍຫລັງ; ແລະ ປະດັບປະດາດ້ວຍ
ໄມ້ລວດລາຍທີ່ງົດງາມ, ແລະ ດ້ວຍສິ່ງທີ່ມີ
ຄ່ານາໆຊະນິດ, ດ້ວຍຄຳ, ແລະ ດ້ວຍເງິນ,
ແລະ ດ້ວຍເຫລັກ, ແລະ ດ້ວຍທອງເຫລືອງ,
ແລະ ດ້ວຍໂລຫະ, ແລະ ດ້ວຍທອງແດງ;
9 ແລະ ເພິ່ນໄດ້ສ້າງວັງອັນກວ້າງໃຫຍ່
ແລະ ບ່ອນນັ່ງໄວ້ທາງກາງ, ແລະ ທັງໝົດ
ເຮັດດ້ວຍໄມ້ແນວດີ ແລະ ປະດັບປະດາ
ດ້ວຍຄຳ ແລະ ເງິນ ແລະ ດ້ວຍສິ່ງຂອງທີ່
ມີຄຸນຄ່າສູງ.
10 ແລະ ເພິ່ນໄດ້ໃຫ້ຄົນງານຂອງເພິ່ນ
ທຳງານດ້ວຍຝີມືປານີດນາໆຊະນິດພາຍ
ໃນກຳແພງຂອງພຣະວິຫານ, ແລະ ເຮັດ
ດ້ວຍໄມ້ແນວດີ ແລະ ດ້ວຍທອງແດງ, ແລະ
ດ້ວຍທອງເຫລືອງ.
11 ແລະ ບ່ອນນັ່ງຖືກຈັດໄວ້ຕ່າງຫາກສຳ
ລັບມະຫາປະໂລຫິດ, ຊຶ່ງຢູ່ສູງກວ່າບ່ອນ
ນັ່ງບ່ອນອື່ນໆທັງໝົດນັ້ນ, ເພິ່ນໄດ້ໃຫ້ເອ້
ດ້ວຍຄຳສົດ; ແລະ ເຮັດຮາວພະນັກໄວ້
ທາງໜ້າບ່ອນນັ່ງ, ເພື່ອພວກປະໂລຫິດຈະ
ໄດ້ເອື່ອຍຕົວ ແລະ ວາງແຂນໄວ້ເທິງນັ້ນ
ຂະນະທີ່ກ່າວຄຳເທັດ ແລະ ບໍ່ມີປະໂຫຍດ
ກັບຜູ້ຄົນຂອງເພິ່ນ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ສ້າງ [ກ]ຫໍສູງຫລັງໜຶ່ງຂຶ້ນ ໃກ້ກັບພຣະ
ວິຫານ; ແທ້ຈິງແລ້ວ, ເປັນຫໍສູງທີ່ສຸດ, ຖ້າ
ຢືນຢູ່ເທິງຍອດຫໍນັ້ນຈະຫລຽວເຫັນແຜ່ນ
ດິນໄຊລຳກັບແຜ່ນດິນເຊັມລອນນຳອີກ,
ຊຶ່ງເປັນແຜ່ນດິນຂອງຊາວເລມັນ; ແລະ
ເພິ່ນສາມາດຫລຽວເຫັນໄດ້ຈົນກະທັ້ງທົ່ວ
ແຜ່ນດິນອ້ອມແອ້ມນັ້ນ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໃຫ້ສ້າງຕຶກອາຄານຫລາຍຫລັງໃນແຜ່ນ
ດິນໄຊລຳ; ແລະ ໃຫ້ສ້າງຫໍສູງໃຫຍ່ບ່ອນ
ໜຶ່ງໄວ້ໃນເນີນພູທາງເໜືອຂອງແຜ່ນດິນ
ໄຊລຳ, ຊຶ່ງເຄີຍເປັນບ່ອນລີ້ໄພສຳລັບລູກ
ຫລານຂອງນີໄຟໃນເວລາທີ່ພວກເຂົາໜີ

12 *ກ* ມຊຢ 19:5–6.

ອອກຈາກແຜ່ນດິນ; ແລະ ເພິ່ນເຮັດແນວ
ນັ້ນ ຕາມ ຄວາມ ຮັ່ງມີ ຊຶ່ງເພິ່ນ ໄດ້ມາຈາກ
ການເກັບພາສີຈາກຜູ້ຄົນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ວາງ ໃຈຢູ່ກັບຂອງມີຄ່າຂອງເພິ່ນ, ແລະ
ເພິ່ນໃຊ້ເວລາດຳລົງຊີວິດຢ່າງສະໜຸກສະ
ບາຍຢູ່ກັບພວກມະເຫສີຂອງເພິ່ນ ແລະ
ພວກນາງສະໜົມທັງຫລາຍຂອງເພິ່ນ;
ແລະ ພວກປະໂລຫິດຂອງເພິ່ນກໍໄດ້ໃຊ້
ເວລາແບບນີ້ຢູ່ກັບພວກຜູ້ຍິງໂສເພນີຂອງ
ພວກເຂົາຄືກັນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ໃຫ້ປູກສວນອະງຸ່ນໄວ້ໂດຍຮອບແຜ່ນ
ດິນ ແລະ ເພິ່ນໄດ້ໃຫ້ສ້າງເຄື່ອງປັ່ນໝາກ
ອະງຸ່ນ, ແລະ ເຮັດເຫລົ້າອະງຸ່ນໄວ້ຢ່າງ
ຫລວງຫລາຍ; ສະນັ້ນ ເພິ່ນຈຶ່ງກັບກາຍ
ເປັນ [ກ]ຄົນຕິດເຫລົ້າອະງຸ່ນ, ແລະ ຜູ້ຄົນ
ຂອງເພິ່ນກໍເໝືອນກັນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາວເລມັນເລີ່ມສົ່ງຄົນມາໂຈມຕີຜູ້ຄົນຂອງ
ເພິ່ນ, ໂຈມຕີຄົນກຸ່ມນ້ອຍ, ແລະ ຂ້າຜູ້ຄົນ
ໃນທົ່ງຂະນະທີ່ພວກເຂົາກຳລັງລ້ຽງຝູງສັດ
ຂອງພວກເຂົາຢູ່.
17 ແລະ ກະສັດ ໂນອາ ໄດ້ ສົ່ງ ທະ ຫານ
ອອກໄປເວນຍາມອ້ອມຮອບແຜ່ນດິນເພື່ອ
ຂັບໄລ່ພວກນັ້ນອອກໄປ; ແຕ່ວ່າເພິ່ນບໍ່
ໄດ້ສົ່ງໄປພຽງພໍ, ແລະ ຊາວເລມັນກໍຍົກ
ມາໂຈມຕີພວກເຂົາອີກ, ແລະ ກວາດເອົາ
ຝູງສັດຂອງພວກເຂົາເປັນຈຳນວນຫລວງ
ຫລາຍອອກໄປຈາກແຜ່ນດິນ; ຊາວເລມັນ
ເລີ່ມຕົ້ນທຳລາຍພວກເຂົາ, ແລະ ໄດ້
ສະແດງຄວາມກຽດຊັງຂອງຕົນຕໍ່ພວກເຂົາ
ເຊັ່ນນັ້ນ.
18 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກະສັດ ໂນອາໄດ້ສົ່ງກອງທະຫານໄປຕໍ່ສູ້
ກັບຊາວເລມັນ, ແລະ ຊາວເລມັນຖືກຂັບໄລ່
ກັບຄືນໄປຊົ່ວໄລຍະໜຶ່ງ; ສະນັ້ນ, ພວກເຂົາ
ຈຶ່ງກັບຄືນມາດ້ວຍຄວາມຍິນດີກັບເຄື່ອງ
ຂອງທີ່ພວກເຂົາຍຶດມາໄດ້ຈາກຊາວເລມັນ.
19 ແລະ ບັດນີ້, ຍ້ອນໄຊຊະນະອັນໃຫຍ່
ຫລວງນີ້ ພວກເຂົາຈຶ່ງມີຄວາມລະເມີເພີ້ຝັນ
ດ້ວຍຄວາມທະນົງໃຈ; ພວກເຂົາໄດ້ [ກ]ອວດ
ອ້າງເຖິງກຳລັງຂອງຕົນເອງ, ໂດຍກ່າວວ່າ
ພວກເຂົາຫ້າສິບຄົນຈະສາມາດຢືນຕໍ່ສູ້ກັບ
ຊາວເລມັນໄດ້ເຖິງພັນຄົນ; ແລະ ພວກເຂົາ
ໄດ້ອວດອ້າງແບບນີ້, ແລະ ໄດ້ຊື່ນຊົມໃນ
ກອງເລືອດ, ແລະ ການນອງເລືອດຂອງພີ່
ນ້ອງຂອງພວກເຂົາ, ແລະ ນີ້ເພາະຄວາມ
ຊົ່ວຮ້າຍຂອງກະສັດ ແລະ ພວກປະໂລຫິດ
ຂອງພວກເຂົາ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
ຊາຍຄົນໜຶ່ງໃນບັນດາພວກເຂົາຊື່ວ່າ [ກ]ອະ
ບີນາໄດ; ແລະ ເພິ່ນໄດ້ອອກໄປໃນບັນດາ
ພວກນີ້ ແລະ ເລີ່ມທຳນາຍວ່າ: ຈົ່ງເບິ່ງ,
ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ແລະ ພຣະ
ອົງໄດ້ບັນຊາຂ້າພະເຈົ້າດັ່ງນີ້, ມີຄວາມວ່າ,
ຈົ່ງອອກໄປ, ແລະ ກ່າວກັບຜູ້ຄົນພວກນີ້
ວ່າ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້—ວິບັດ
ແກ່ຜູ້ຄົນພວກນີ້, ເພາະເຮົາເຫັນຄວາມໜ້າ
ກຽດຊັງຂອງພວກເຂົາ, ແລະ ຄວາມຊົ່ວ
ຮ້າຍ, ແລະ ການໂສເພນີຂອງພວກເຂົາ;
ແລະ ຖ້າຫາກພວກເຂົາບໍ່ກັບໃຈ ເຮົາຈະ
ມາຢ້ຽມຢາມພວກເຂົາໃນຄວາມຄຽດແຄ້ນ
ຂອງເຮົາ.
21 ແລະ ຖ້າຫາກພວກເຂົາບໍ່ກັບໃຈຫັນ
ໜ້າມາຫາພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ, ຈົ່ງເບິ່ງ, ເຮົາຈະປ່ອຍ
ໃຫ້ພວກເຂົາຢູ່ໃນກຳມືຂອງສັດຕູ; ແທ້ຈິງ

15 *ກ* ຄມພ ພຣະວາຈາ ແຫ່ງປັນຍາ.
19 *ກ* ຄພ 3:4. ຄມພ ຈອງຫອງ, ຄວາມຈອງຫອງ.
20 *ກ* ຄມພ ອະບີນາໄດ.

ແລ້ວ, ພວກເຂົາຈະຖືກນຳໄປ ᵍເປັນທາດ; ແລະ ພວກເຂົາຈະເປັນທຸກໂດຍມືຂອງສັດຕູຂອງພວກເຂົາ.

22 ແລະ ເຫດການຈະບັງເກີດຂຶ້ນຄື ພວກເຂົາຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແລະ ຄື ພຣະເຈົ້າທີ່ ᵍອິດສາມາຢ້ຽມຢາມຄວາມຊົ່ວຮ້າຍຂອງຜູ້ຄົນຂອງເຮົາ.

23 ແລະ ເຫດການຈະບັງເກີດຂຶ້ນຄື ຖ້າຫາກຜູ້ຄົນພວກນີ້ບໍ່ກັບໃຈ ແລະ ຫັນໜ້າມາຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາແລ້ວ, ພວກເຂົາຈະຖືກນຳໄປເປັນທາດ ແລະ ຈະບໍ່ມີຜູ້ໃດສາມາດປົດປ່ອຍພວກເຂົາໄດ້, ນອກຈາກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ເທົ່ານັ້ນ.

24 ແທ້ຈິງແລ້ວ, ແລະ ເຫດການຈະບັງເກີດຂຶ້ນຄື ເວລາພວກເຂົາຮ້ອງທູນຕໍ່ເຮົາ, ເຮົາຈະ ᵍລ້າຊ້າທີ່ຈະຍິນສຽງຮ້ອງຂໍຂອງພວກເຂົາ; ແທ້ຈິງແລ້ວ, ເຮົາຈະປ່ອຍໃຫ້ສັດຕູລົງໂທດພວກເຂົາ.

25 ແລະ ຖ້າຫາກພວກເຂົາບໍ່ກັບໃຈມານຸ່ງຜ້າກະສອບ ແລະ ເທົ່າຖ່ານ, ແລະ ຮ້ອງຂໍຢ່າງສຸດກຳລັງຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາແລ້ວ, ເຮົາຈະບໍ່ ᵍຟັງຄຳອະທິຖານຂອງພວກເຂົາເລີຍ; ທັງຈະບໍ່ປົດປ່ອຍພວກເຂົາອອກຈາກຄວາມທຸກຂອງພວກເຂົາ; ແລະ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ແລະ ພຣະອົງໄດ້ບັນຊາຂ້າພະເຈົ້າແບບນີ້.

26 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອອະບີນາໄດເວົ້າຂໍ້ຄວາມນີ້ກັບພວກເຂົາ, ພວກເຂົາກໍຄຽດແຄ້ນໃຫ້ເພິ່ນ, ແລະ ພະຍາຍາມຈະເອົາຊີວິດຂອງເພິ່ນ; ແຕ່ພຣະຜູ້ເປັນເຈົ້າໄດ້ປົດປ່ອຍເພິ່ນໃຫ້ຫລຸດຈາກກຳມືຂອງພວກເຂົາ.

27 ບັດນີ້ ເມື່ອກະສັດໂນອາໄດ້ຍິນຂໍ້ຄວາມຂອງອະບີນາໄດຈາກຜູ້ຄົນແລ້ວ, ເພິ່ນກໍຄຽດແຄ້ນຄືກັນ; ແລະ ກ່າວວ່າ: ອະບີນາໄດເປັນໃຜທີ່ຈະມາຕັດສິນເຮົາ ແລະ ຜູ້ຄົນຂອງເຮົາ, ຫລື ວ່າພຣະຜູ້ເປັນເຈົ້າ ᵍອົງໃດທີ່ຈະເອົາຄວາມທຸກຢ່າງແສນສາຫັດມາໃຫ້ຜູ້ຄົນຂອງເຮົາ?

28 ເຮົາສັ່ງໃຫ້ພວກເຈົ້າຈັບເອົາອະບີນາໄດມາບ່ອນນີ້ ເພື່ອເຮົາຈະໄດ້ຂ້າມັນເສຍ ເພາະວ່າມັນໄດ້ກ່າວເລື່ອງເຫລົ່ານີ້ເພື່ອຍຸຍົງຜູ້ຄົນຂອງເຮົາໃຫ້ຄຽດແຄ້ນໃຫ້ກັນ, ແລະ ໃຫ້ເກີດມີຄວາມຜິດຖຽງກັນໃນບັນດາຜູ້ຄົນຂອງເຮົາ; ສະນັ້ນ ເຮົາຈະຂ້າມັນຖິ້ມເສຍ.

29 ບັດນີ້ຕາຂອງຜູ້ຄົນ ᵍບອດ; ສະນັ້ນ ພວກເຂົາຈຶ່ງເຮັດໃຈ ᵇແຂງກະດ້າງຕໍ່ຄຳຂອງອະບີນາໄດ, ແລະ ນັບຈາກນັ້ນມາພວກເຂົາໄດ້ພະຍາຍາມທີ່ຈະຈັບເພິ່ນ. ແລະ ກະສັດໂນອາໄດ້ເຮັດໃຈຂອງພວກເຂົາແຂງກະດ້າງຕໍ່ພຣະຄຳຂອງພຣະຜູ້ເປັນເຈົ້າ, ແລະ ເພິ່ນບໍ່ໄດ້ກັບໃຈຈາກການເຮັດຄວາມຊົ່ວຂອງເພິ່ນເລີຍ.

## ບົດທີ 12

*ອະບີນາໄດຖືກເອົາເຂົ້າຄຸກເພາະການທຳນາຍຂອງເພິ່ນເຖິງການທຳລາຍຂອງຜູ້ຄົນ ແລະ ເຖິງການແກ່ກຳຂອງກະສັດໂນອາ—*

21 *ກ* ມຊຢ 12:2; 20:21; 21:13–15; 23:21–23.
22 *ກ* ອພຍ 20:5; ພບຍ 6:15; ມຊຢ 13:13.
24 *ກ* ມກ 3:4; ມຊຢ 21:15.
25 *ກ* ອຊຢ 1:15; 59:2.
27 *ກ* ອພຍ 5:2; ມຊຢ 12:13.
29 *ກ* ມຊ 4:4.
*ຂ* ແອວ 33:20; ອທ 11:13.

*ປະ ໂລຫິດ ຈອມປອມກ່າວອ້າງພຣະຄຳພີ ແລະ ທຳທ່າວ່າຮັກສາກົດຂອງໂມເຊ—ອະບີນາໄດເລີ່ມສິດສອນພຣະບັນຍັດສິບປະການ. ປະມານ 148 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກນັ້ນເປັນເວລາສອງປີຄື ອະບີນາໄດ
ໄດ້ປອມຕົວມາໃນບັນດາພວກເຂົາ ຈົນວ່າ
ຄົນທັງຫລາຍຈຳເພິ່ນບໍ່ໄດ້ເລີຍ, ແລະ ເພິ່ນ
ໄດ້ທຳນາຍໃນບັນດາພວກນັ້ນ, ມີຄວາມ
ວ່າ: ພຣະຜູ້ເປັນເຈົ້າໄດ້ບັນຊາຂ້າພະເຈົ້າ
ດັ່ງນີ້—ອະບີນາໄດ, ເຈົ້າຈົ່ງໄປທຳນາຍ
ແກ່ຜູ້ຄົນຂອງເຮົາ, ເພາະພວກເຂົາໄດ້
ເຮັດໃຈແຂງກະດ້າງຕໍ່ຄຳຂອງເຮົາ; ພວກ
ເຂົາບໍ່ໄດ້ກັບໃຈຈາກການເຮັດຄວາມຊົ່ວ
ຂອງພວກເຂົາ; ສະນັ້ນ, ເຮົາຈະມາຢ້ຽມ
ຢາມພວກເຂົາໃນຄວາມພິໂລດຂອງເຮົາ,
ແທ້ຈິງແລ້ວ, ໃນຄວາມພິໂລດອັນຮຸນແຮງ
ຂອງເຮົາ, ເຮົາຈະມາ [ກ]ຢ້ຽມຢາມພວກເຂົາ
ໃນຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ
ຂອງພວກເຂົາ.
2 ແທ້ຈິງແລ້ວ, ວິບັດແກ່ຄົນລຸ້ນນີ້! ແລະ
ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ:
ເຈົ້າຈົ່ງຍື່ນມືຂອງເຈົ້າອອກໄປ ແລະ ທຳ
ນາຍວ່າ: ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້,
ເຫດການຈະບັງເກີດຂຶ້ນຄື ເພາະຄວາມ
ຊົ່ວຮ້າຍຂອງພວກເຂົາ, ຄົນລຸ້ນນີ້ຈະຖືກ
ນຳໄປເປັນ [ກ]ທາດ, ແລະ ຈະຖືກ [ຂ]ຕົບໜ້າ;
ແທ້ຈິງແລ້ວ, ແລະ ຈະຖືກຄົນມາກວາດ
ເອົາໄປ, ແລະ ຖືກຂ້າຖິ້ມ; ແລະ ແຮ້ງໃນ
ອາກາດ, ແລະ ໝາ, ແລະ ສັດປ່າຈະມາກິນ
ເນື້ອໜັງຂອງພວກເຂົາ.
3 ແລະ ເຫດການຈະບັງເກີດຂຶ້ນຄື [ກ]ຊີ
ວິດຂອງກະສັດໂນອາອາດຈະມີຄຸນຄ່າ
ເທົ່າກັບອາພອນໃນ [ຂ]ເຕົາໄຟອັນຮ້ອນ;
ເພື່ອເຂົາຈະໄດ້ຮູ້ວ່າ ເຮົາຄືພຣະຜູ້ເປັນ
ເຈົ້າ.
4 ແລະ ເຫດການຈະບັງເກີດຂຶ້ນຄື ເຮົາ
ຈະລົງໂທດຜູ້ຄົນພວກນີ້ຂອງເຮົາດ້ວຍ
ຄວາມທຸກຢ່າງແສນສາຫັດ, ແທ້ຈິງແລ້ວ,
ດ້ວຍຄວາມອຶດຢາກ ແລະ ດ້ວຍ [ກ]ພະຍາດ
ໂລຄາ; ແລະ ເຮົາຈະໃຫ້ພວກເຂົາຮ້ອງ
[ຂ]ຄ່ຳຄວນຕະຫລອດທັງວັນ.
5 ແທ້ຈິງແລ້ວ, ແລະ ເຮົາຈະໃຫ້ [ກ]ພາລະ
ໜັກຕິດຢູ່ເທິງຫລັງຂອງພວກເຂົາ; ແລະ
ຖືກໄລ່ກວາດໄປທາງໜ້າຄືກັບໂຕລໍທີ່ບໍ່ມີ
ຄວາມຄິດ.
6 ແລະ ເຫດການຈະບັງເກີດຂຶ້ນຄື ເຮົາ
ຈະສົ່ງໝາກເຫັບໃຫ້ຕົກລົງມາໃນບັນດາ
ພວກເຂົາ, ແລະ ມັນຈະຕົກຖືກພວກເຂົາ;
ແລະ ພວກເຂົາຈະຖືກລົງໂທດດ້ວຍ [ກ]ລົມ
ຂອງຕາເວັນອອກນຳອີກ; ແລະ [ຂ]ແມງ
ໄມ້ຈະລົງມາກິນພືດພັນໃນແຜ່ນດິນຂອງ
ພວກເຂົາ.
7 ແລະ ພວກເຂົາຈະຖືກລົງໂທດດ້ວຍ
ພະຍາດໂລຄາອັນຮ້າຍແຮງ—ແລະ ເຮົາ
ຈະເຮັດທຸກຢ່າງນີ້ເພາະ [ກ]ຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງພວກເຂົາ.
8 ແລະ ເຫດການຈະບັງເກີດຂຶ້ນຄື ຖ້າ
ຫາກພວກເຂົາບໍ່ກັບໃຈ ເຮົາຈະ [ກ]ທຳລາຍ
ພວກເຂົາໃຫ້ໝົດສິ້ນໄປຈາກພື້ນແຜ່ນດິນ
ໂລກ; ເຖິງຢ່າງໃດກໍຕາມ ພວກເຂົາຈະປະ

**12** 1 *ກ* ອຊຢ 65:6.
2 *ກ* ມຊຢ 11:21; 20:21; 21:13–15; 23:21–23.
*ຂ* ມຊຢ 21:3–4.
3 *ກ* ມຊຢ 12:10.
*ຂ* ມຊຢ 19:20.
4 *ກ* ຄພ 97:26.
*ຂ* ມຊຢ 21:9–10.
5 *ກ* ມຊຢ 21:3.
6 *ກ* ຢມຢ 18:17; ມຊຢ 7:31.
*ຂ* ອພຢ 10:1–12.
7 *ກ* ຄພ 3:18.
8 *ກ* ແອວ 45:9–14.

ᵃບັນທຶກໜຶ່ງໄວ້ ເພື່ອຈະໄດ້ຮັກສາມັນໄວ້
ໃຫ້ປະຊາຊາດອື່ນທີ່ຈະມາເປັນເຈົ້າຂອງ
ແຜ່ນດິນ; ແທ້ຈິງແລ້ວ, ເຮົາເຮັດໄປເພື່ອ
ເຮົາຈະເປີດໂສມໜ້າຂອງຜູ້ຄົນພວກນີ້ແກ່
ປະຊາຊາດອື່ນ. ແລະ ອະບີນາໄດໄດ້ທຳ
ນາຍແກ່ຜູ້ຄົນພວກນີ້ຫລາຍເລື່ອງ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາຄຽດແຄ້ນໃຫ້ເພິ່ນ; ແລະ ພວກເຂົາ
ໄດ້ຈັບມັດເພິ່ນ ແລະ ພາເພິ່ນໄປຢູ່ຕໍ່ໜ້າ
ກະສັດ, ແລະ ກ່າວກັບກະສັດວ່າ: ຈົ່ງເບິ່ງ,
ພວກຂ້ານ້ອຍໄດ້ຈັບເອົາຄົນຜູ້ນີ້ມາຢູ່ຕໍ່ໜ້າ
ທ່ານ ຜູ້ໄດ້ທຳນາຍເຖິງຄວາມຊົ່ວກ່ຽວກັບ
ຜູ້ຄົນຂອງທ່ານ, ແລະ ກ່າວວ່າພຣະເຈົ້າ
ຈະທຳລາຍພວກເຂົາ.
10 ແລະ ລາວໄດ້ທຳນາຍເຖິງຄວາມ
ຊົ່ວກ່ຽວກັບຊີວິດຂອງທ່ານນຳອີກ, ແລະ
ກ່າວວ່າຊີວິດຂອງທ່ານຈະເປັນຄືກັນ
ກັບອາພອນໃນເຕົາໄຟ.
11 ແລະ ລາວໄດ້ເວົ້າອີກວ່າ, ທ່ານຈະ
ເປັນຄືກັນກັບຕົ້ນເຂົ້າທີ່ແຫ້ງໃນທົ່ງ, ຊຶ່ງ
ຖືກຝູງສັດແລ່ນທັບ ແລະ ຢຽບຢ່ຳຢູ່ໃຕ້
ຕີນ.
12 ແລະ ອີກຢ່າງໜຶ່ງ, ລາວກ່າວວ່າ
ທ່ານຈະເປັນຄືດອກໄມ້ຂອງຕົ້ນໜາມ ຊຶ່ງ
ເວລາມັນບານເຕັມທີ່, ຖ້າລົມພັດມາ ມັນ
ຈະປິວໄປທົ່ວແຜ່ນດິນ. ແລະ ລາວອ້າງວ່າ
ພຣະຜູ້ເປັນເຈົ້າໄດ້ຮັບສັ່ງເລື່ອງນີ້. ແລະ
ລາວເວົ້າວ່າທັງໝົດນີ້ຈະເກີດກັບທ່ານ ຖ້າ
ຫາກທ່ານບໍ່ກັບໃຈ, ແລະ ນີ້ເພາະຄວາມ
ຊົ່ວຮ້າຍຂອງທ່ານ.
13 ແລະ ບັດນີ້, ໂອ້ ກະສັດເອີຍ ທ່ານ
ໄດ້ເຮັດຄວາມຊົ່ວອັນໃຫຍ່ຫລວງແນວໃດ,
ຫລື ຜູ້ຄົນຂອງທ່ານໄດ້ກະທຳບາບອັນ
ໃຫຍ່ຫລວງແນວໃດ, ຈຶ່ງວ່າພວກເຮົາຖືກ
ພຣະເຈົ້າລົງໂທດ ຫລື ຄົນຜູ້ນີ້ຕັດສິນເອົາ
ເອງ?
14 ແລະ ບັດນີ້, ໂອ້ ກະສັດເອີຍ ພວກ
ເຮົາບໍ່ມີຄວາມຜິດ, ແລະ ໂອ້ ກະສັດເອີຍ
ທ່ານບໍ່ໄດ້ເຮັດບາບແນວໃດເລີຍ; ສະນັ້ນ,
ຄົນຜູ້ນີ້ຈຶ່ງເວົ້າຕົວະກ່ຽວກັບທ່ານ ແລະ
ລາວທຳນາຍໄປລ້າໆ.
15 ຈົ່ງເບິ່ງ, ພວກເຮົາເຂັ້ມແຂງ, ພວກ
ເຮົາຈະບໍ່ໄປສູ່ຄວາມເປັນທາດຢ່າງເດັດ
ຂາດ, ຫລື ຖືກສັດຕູເອົາໄປເປັນຊະເລີຍ;
ແທ້ຈິງແລ້ວ, ທ່ານເປັນຜູ້ຈະເລີນຮຸ່ງເຮືອງ
ໃນແຜ່ນດິນ ແລະ ຈະຈະເລີນຮຸ່ງເຮືອງຕໍ່
ໄປ.
16 ຈົ່ງເບິ່ງ, ນີ້ຄືຄົນຜູ້ທີ່ພວກຂ້ານ້ອຍຈະ
ມອບໃຫ້ຢູ່ໃນມືຂອງທ່ານ; ທ່ານຈົ່ງເຮັດ
ກັບລາວສຸດແລ້ວແຕ່ທ່ານຈະເຫັນດີ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກະສັດໂນອາໄດ້ສັ່ງໃຫ້ເອົາອະບີນາໄດ
ເຂົ້າຄຸກ; ແລະ ເພິ່ນໄດ້ສັ່ງໃຫ້ ᵃພວກປະ
ໂລຫິດມາເຕົ້າໂຮມກັນເພື່ອຈະມີກອງປະ
ຊຸມປຶກສາຫາລືກັນວ່າ ຈະເຮັດແນວໃດກັບ
ເພິ່ນ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາກ່າວກັບກະສັດວ່າ: ຈົ່ງເອົາຄົນ
ຜູ້ນັ້ນມານີ້ ເພື່ອພວກເຮົາຈະໄດ້ຊັກຖາມ;
ແລະ ກະສັດໄດ້ສັ່ງໃຫ້ນຳເອົາອະບີນາໄດ
ມາຢູ່ຕໍ່ໜ້າພວກເຂົາ.
19 ແລະ ພວກເຂົາເລີ່ມສອບຖາມເພິ່ນ,
ເພື່ອຈະໄດ້ຈັບເອົາຄວາມຜິດຈາກເພິ່ນ,
ເພື່ອພວກເຂົາຈະມີອັນໃດອັນໜຶ່ງເພື່ອ
ກ່າວຫາເພິ່ນ; ແຕ່ເພິ່ນໄດ້ຕອບພວກເຂົາ
ຢ່າງອາດຫານ, ແລະ ແກ້ຄຳຖາມຂອງ
ພວກເຂົາໄດ້ທຸກຂໍ້, ແທ້ຈິງແລ້ວ, ໄດ້ເຮັດ
ໃຫ້ພວກເຂົາປະຫລາດໃຈ; ເພາະເພິ່ນ

8 *ຂ* ມມ 8:14–16.
17 *ກ* ມຊຢ 11:11.

ຕອບ ຄຳ ຖາມ ຂອງ ພວກ ເຂົາ [ກ]ໄດ້ ທຸກ ຂໍ້,
ແລະ ເຮັດໃຫ້ພວກເຂົາຍອມຈຳນົນໃນຄຳ
ເວົ້າຂອງພວກເຂົາເອງ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ຜູ້ໜຶ່ງໃນພວກເຂົາກ່າວກັບອະບີນາໄດວ່າ:
ຂໍ້ຄວາມຊຶ່ງຂຽນໄວ້, ແລະ ຊຶ່ງບັນພະບຸລຸດ
ໄດ້ສິດສອນໄວ້ໝາຍຄວາມວ່າແນວໃດ, ທີ່
ວ່າ:
21 ຕີນຂອງຜູ້ທີ່ຢູ່ເທິງພູນັ້ນງາມ [ກ]ພຽງ
ໃດ ຜູ້ທີ່ໄດ້ນຳເອົາຂ່າວປະເສີດມາ; ທີ່ໄດ້
ປະກາດສັນຕິສຸກ; ທີ່ນຳເອົາຂ່າວປະເສີດ
ຂອງຄວາມດີມາ; ທີ່ປະກາດຄວາມລອດ;
ທີ່ກ່າວກັບຊີໂອນວ່າ ພຣະເຈົ້າຂອງເຈົ້າຊົງ
ປົກຄອງ;
22 ຄົນຍາມຂອງເຈົ້າຈະເປັ່ງສຽງ; ພວກ
ເຂົາຈະຮ້ອງເປັນສຽງດຽວກັນ; ເພາະພວກ
ເຂົາຈະເຫັນກັບຕາ ເວລາພຣະຜູ້ເປັນເຈົ້າ
ຈະນຳເອົາຊີໂອນກັບຄືນມາອີກ;
23 ຈົ່ງເປັ່ງສຽງປິຕິຍິນດີ; ຮ້ອງເພງນຳ
ກັນ, ກຸງເຢຣູຊາເລັມເອີຍ ເຈົ້າຜູ້ທີ່ເປັນ
ເມືອງຮົກຮ້າງ; ເພາະພຣະຜູ້ເປັນເຈົ້າໄດ້
ອອຍໃຈຜູ້ຄົນຂອງພຣະອົງແລ້ວ, ພຣະອົງ
ໄດ້ໄຖ່ກຸງເຢຣູຊາເລັມແລ້ວ;
24 ພຣະຜູ້ເປັນເຈົ້າໄດ້ກາງ [ກ]ແຂນອັນ
ສັກສິດຂອງພຣະອົງໃນສາຍຕາຂອງປະ
ຊາຊາດທັງປວງ, ແລະ ທົ່ວທີ່ສຸດຂອງແຜ່ນ
ດິນໂລກຈະເຫັນການຊ່ວຍໃຫ້ລອດຂອງ
ພຣະເຈົ້າຂອງພວກເຮົາ.
25 ແລະ ບັດນີ້ອະບີນາໄດກ່າວກັບພວກ
ເຂົາວ່າ: ພວກທ່ານເປັນ [ກ]ປະໂລຫິດແມ່ນ
ບໍ, ແລະ ອ້າງຕົນເອງເພື່ອສິດສອນຜູ້ຄົນ
ພວກນີ້, ແລະ ເຂົ້າໃຈວິນຍານແຫ່ງການ
ທຳນາຍແລ້ວ, ແລະ ປານນັ້ນຍັງປາດຖະ
ໜາຢາກຮູ້ຈັກຈາກຂ້າພະເຈົ້າວ່າ ສິ່ງເຫລົ່າ
ນີ້ໝາຍຄວາມວ່າແນວໃດ?
26 ຂ້າພະເຈົ້າກ່າວກັບພວກທ່ານວ່າ,
ວິບັດແກ່ພວກທ່ານ ເພາະວ່າພວກທ່ານ
ບິດເບືອນທາງຂອງພຣະຜູ້ເປັນເຈົ້າ! ເພາະ
ວ່າຖ້າຫາກພວກທ່ານເຂົ້າໃຈເລື່ອງເຫລົ່າ
ນີ້ ເປັນຫຍັງພວກທ່ານຈຶ່ງບໍ່ສິດສອນພວກ
ເຂົາ; ສະນັ້ນ, ພວກທ່ານໄດ້ບິດເບືອນທາງ
ຂອງພຣະຜູ້ເປັນເຈົ້າ.
27 ພວກ ທ່ານ ບໍ່ ໄດ້ ຕັ້ງ ໃຈ ເພື່ອ ໃຫ້
[ກ]ເຂົ້າໃຈເລີຍ; ສະນັ້ນ, ພວກທ່ານຈຶ່ງບໍ່
ສະຫລາດ. ສະນັ້ນ, ພວກທ່ານສິດສອນສິ່ງ
ໃດແດ່ກັບຜູ້ຄົນພວກນີ້?
28 ແລະ ພວກເຂົາຕອບວ່າ: ພວກເຮົາ
ສິດສອນກົດຂອງໂມເຊ.
29 ແລະ ເພິ່ນໄດ້ກ່າວກັບພວກເຂົາອີກ
ວ່າ: ຖ້າຫາກພວກທ່ານສິດສອນ [ກ]ກົດຂອງ
ໂມເຊແລ້ວ ເປັນຫຍັງພວກທ່ານຈຶ່ງບໍ່ຮັກ
ສາມັນ? ເປັນຫຍັງພວກທ່ານຈຶ່ງໝົກໝຸ້ນຢູ່
ກັບຂອງມີຄ່າ? ເປັນຫຍັງພວກທ່ານຈຶ່ງທຳ
[ຂ]ການໂສເພນີ ແລະ ໃຊ້ກຳລັງຂອງພວກ
ທ່ານກັບພວກຜູ້ຍິງໂສເພນີ, ແທ້ຈິງແລ້ວ,
ເປັນເຫດໃຫ້ຜູ້ຄົນພວກນີ້ກະທຳບາບນຳ
ກັນອີກ, ຈົນເປັນເຫດໃຫ້ພຣະຜູ້ເປັນເຈົ້າ
ສົ່ງຂ້າພະເຈົ້າມາທຳນາຍແກ່ຜູ້ຄົນພວກນີ້,
ແທ້ຈິງແລ້ວ, ຄວາມຊົ່ວອັນໃຫຍ່ຫລວງຈະ
ມາລົງໂທດຜູ້ຄົນພວກນີ້?
30 ພວກທ່ານບໍ່ຮູ້ຈັກບໍວ່າ ຂ້າພະເຈົ້າ
ເວົ້າຄວາມຈິງ? ແທ້ຈິງແລ້ວ, ພວກທ່ານ
ຮູ້ຈັກວ່າຂ້າພະເຈົ້າເວົ້າຄວາມຈິງ; ແລະ
ພວກທ່ານຄວນຈະສັ່ນສະທ້ານຢູ່ຕໍ່ພຣະ
ພັກຂອງພຣະເຈົ້າ.
31 ແລະ ເຫດການຈະບັງເກີດຂຶ້ນຄື

19 *ກ* ຄພ 100:5–6.
21 *ກ* ອຊຢ 52:7–10; ນຮ 1:15.
24 *ກ* 1 ນຟ 22:11.
25 *ກ* ມຊຢ 11:5.
27 *ກ* ຄນພ ເຂົ້າໃຈ, ຄວາມເຂົ້າໃຈ.
29 *ກ* ຄນພ ກົດຂອງໂມເຊ.
*ຂ* ຄນພ ຫລິ້ນຊູ້.

ພວກ ທ່ານ ຈະ ຖືກ ລົງ ໂທດ ເພາະ ຄວາມ
ຊົ່ວຮ້າຍຂອງພວກທ່ານ, ເພາະພວກທ່ານ
ກ່າວວ່າ ພວກທ່ານສິດສອນກົດຂອງໂມເຊ
ນັ້ນ. ແລະ ພວກທ່ານຮູ້ຈັກຫຍັງແດ່ກ່ຽວ
ກັບກົດຂອງໂມເຊ? ຄວາມລອດມາເຖິງ
ໂດຍທາງກົດຂອງໂມເຊ [ກ]ບໍ? ພວກທ່ານ
ຈະຕອບວ່າແນວໃດ?
32 ແລະ ພວກເຂົາໄດ້ຕອບວ່າ ຄວາມ
ລອດມາເຖິງໂດຍທາງກົດຂອງໂມເຊ.
33 ແຕ່ບັດນີ້ອະບີນາໄດໄດ້ກ່າວກັບ
ພວກເຂົາວ່າ: ຂ້າພະເຈົ້າຮູ້ຈັກວ່າ ຖ້າ
ຫາກພວກທ່ານຮັກສາພຣະບັນຍັດຂອງ
ພຣະເຈົ້າແລ້ວ ພວກທ່ານຈະລອດ; ແທ້ຈິງ
ແລ້ວ, ຖ້າຫາກພວກທ່ານຮັກສາພຣະບັນ
ຍັດທີ່ພຣະຜູ້ເປັນເຈົ້າໄດ້ນຳມາໃຫ້ໂມເຊຢູ່
ເທິງ [ກ]ພູຊີນາຍ, ກ່າວວ່າ:
34 [ກ]ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງເຈົ້າ, ຜູ້ [ຂ]ພາເຈົ້າອອກຈາກແຜ່ນ
ດິນເອຢິບ, ອອກຈາກບ້ານເຮືອນແຫ່ງ
ຄວາມເປັນທາດ.
35 ເຈົ້າຈະບໍ່ມີພຣະເຈົ້າອົງ [ກ]ອື່ນຕໍ່ໜ້າ
ເຮົາ.
36 ເຈົ້າຈະບໍ່ເຮັດຮູບຄວັດສະຫລັກອັນ
ໃດສຳລັບຕົນເອງ ຫລື ເຮັດຮູບສົມມຸດໃນ
ສະຫວັນເບື້ອງເທິງ, ຫລື ສິ່ງຂອງຊຶ່ງຢູ່ໃນ
ແຜ່ນດິນເບື້ອງລຸ່ມ.
37 ບັດນີ້ອະບີນາໄດກ່າວກັບພວກເຂົາ
ວ່າ, ພວກທ່ານເຮັດເລື່ອງທັງໝົດນີ້ແລ້ວ
ບໍ? ຂ້າພະເຈົ້າກ່າວກັບພວກທ່ານ ວ່າ, ບໍ່
ເລີຍ, ພວກທ່ານບໍ່ໄດ້ເຮັດ. ແລະ ພວກ
ທ່ານ [ກ]ສິດສອນຜູ້ຄົນພວກນີ້ໃຫ້ພວກເຂົາ
ເຮັດສິ່ງເຫລົ່ານີ້ທັງໝົດແລ້ວບໍ? ຂ້າພະເຈົ້າ
ກ່າວກັບພວກທ່ານວ່າ, ບໍ່ເລີຍ, ພວກທ່ານ
ບໍ່ໄດ້ສິດສອນ.

## ບົດທີ 13

*ອະບີນາໄດໄດ້ຖືກປົກປ້ອງໂດຍອຳນາດ
ອັນສັກສິດ—ເພິ່ນສິດສອນພຣະບັນຍັດ
ສິບປະການ—ຄວາມລອດບໍ່ໄດ້ມາເຖິງ
ໂດຍທາງກົດຂອງໂມເຊແຕ່ຝ່າຍດຽວ—
ພຣະເຈົ້າພຣະອົງເອງຈະກະທຳການຊົດ
ໃຊ້ ແລະ ໄຖ່ຜູ້ຄົນຂອງພຣະອົງ. ປະມານ
148 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເມື່ອກະສັດໄດ້ຍິນຂໍ້ຄວາມ
ເຫລົ່ານີ້ແລ້ວ, ເພິ່ນໄດ້ກ່າວກັບປະໂລຫິດ
ຂອງເພິ່ນວ່າ: ເອົາຄົນນີ້ໄປຂ້າຖິ້ມເສຍ;
ເພາະວ່າພວກເຮົາບໍ່ມີຫຍັງຫຍຸ້ງກ່ຽວກັບ
ມັນແລ້ວ, ເພາະວ່າມັນເປັນບ້າ.
2 ແລະ ພວກເຂົາອອກມາ ແລະ ພະຍາ
ຍາມທີ່ຈະຈັບອະບີນາໄດ; ແຕ່ເພິ່ນໄດ້ຕ້ານ
ທານໄວ້, ແລະ ກ່າວກັບພວກເຂົາວ່າ:
3 ຢ່າ ໄດ້ ແຕະ ຕ້ອງ ຂ້າພະເຈົ້າ ເລີຍ,
ເພາະວ່າພຣະເຈົ້າຈະລົງໂທດພວກທ່ານ
ຖ້າຫາກພວກທ່ານແຕະຕ້ອງຂ້າພະເຈົ້າ,
ເພາະວ່າຂ້າພະເຈົ້າຍັງບໍ່ທັນໄດ້ແຈ້ງຂ່າວ
ຊຶ່ງພຣະຜູ້ເປັນເຈົ້າສົ່ງຂ້າພະເຈົ້າມາ; ທັງ
ຂ້າພະເຈົ້າຍັງບໍ່ທັນໄດ້ບອກເລື່ອງ ຊຶ່ງພຣະ
ອົງໄດ້ໃຫ້ຂ້າພະເຈົ້າ [ກ]ມາບອກ; ສະນັ້ນ,
ພຣະເຈົ້າຈະບໍ່ຍອມໃຫ້ຂ້າພະເຈົ້າຖືກທຳ
ລາຍໃນເວລານີ້ຢ່າງເດັດຂາດ.
4 ແຕ່ຂ້າພະເຈົ້າຕ້ອງເຮັດໃຫ້ພຣະບັນ
ຍັດສຳເລັດຕາມທີ່ພຣະເຈົ້າໄດ້ບັນຊາຂ້າ
ພະເຈົ້າ; ແລະ ເພາະວ່າຂ້າພະເຈົ້າບອກ

31 *ກ* ມຊຢ 3:15; 13:27–32; ແອວ 25:16.
33 *ກ* ອພຍ 19:9, 16–20; ມຊຢ 13:5.
34 *ກ* ອພຍ 20:2–4.
*ຂ* ອພຍ 12:51; 1 ນຟ 17:40; ມຊຢ 7:19.
35 *ກ* ຣສອ 13:4.
ຄມພ ການນັບຖືຮູບບູຊາ.
37 *ກ* ມຊຢ 13:25–26.
**13** 3 *ກ* ມຊຢ 12:20–24.

ຄວາມ ຈິງ ແກ່ ພວກ ທ່ານ, ພວກ ທ່ານ ຈຶ່ງ
ຄຽດ ແຄ້ນ ໃຫ້ ຂ້າ ພະ ເຈົ້າ. ແລະ ອີກ ຢ່າງ
ໜຶ່ງ, ເພາະ ຂ້າພະ ເຈົ້າ ເວົ້າ ພຣະ ຄຳ ຂອງ
ພຣະ ເຈົ້າ ພວກທ່ານຈຶ່ງຕັດສິນວ່າຂ້າພະ
ເຈົ້າເປັນບ້າ.
5 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກອະບີນາໄດໄດ້ກ່າວຂໍ້ຄວາມນີ້ແລ້ວ,
ຄົນ ຂອງ ກະສັດ ຂອງ ໂນອາ ຈຶ່ງບໍ່ກ້າຈັບ
ເພິ່ນ, ເພາະວ່າພຣະວິນຍານຂອງພຣະຜູ້
ເປັນເຈົ້າໄດ້ມາສະຖິດຢູ່ກັບເພິ່ນ; ແລະ ໃບ
ໜ້າຂອງເພິ່ນສົ່ງ *ກ*ແສງສະຫວ່າງອອກມາ
ດ້ວຍລັດສະໝີຄືກັນກັບຕອນທີ່ໄດ້ເກີດກັບ
ໂມເຊເວລາຢູ່ຈອມພູຊີນາຍ, ເວລາເພິ່ນ
ສົນທະນາກັບພຣະຜູ້ເປັນເຈົ້າ.
6 ແລະ ອະ ບີ ນາ ໄດ ໄດ້ ເວົ້າ ດ້ວຍ
*ກ*ອຳນາດ ແລະ ສິດອຳນາດຈາກພຣະເຈົ້າ;
ແລະ ເພິ່ນໄດ້ເວົ້າຕໍ່ໄປ, ໂດຍກ່າວວ່າ:
7 ພວກທ່ານ ເຫັນຢູ່ວ່າ ພວກທ່ານບໍ່ມີ
ອຳນາດຈະຂ້າຂ້າພະເຈົ້າໄດ້, ສະນັ້ນ ຂ້າ
ພະເຈົ້າຈຶ່ງຂໍຈົບຂ່າວສານຂອງຂ້າພະເຈົ້າ.
ແທ້ຈິງແລ້ວ, ແລະ ຂ້າພະເຈົ້າເຫັນວ່າມັນ
*ກ*ແຕະຕ້ອງໃຈພວກທ່ານ ເພາະວ່າຂ້າພະ
ເຈົ້າບອກເຖິງຄວາມຈິງກ່ຽວກັບຄວາມຊົ່ວ
ຮ້າຍຂອງພວກທ່ານ.
8 ແທ້ຈິງແລ້ວ, ແລະ ຄຳເວົ້າຂອງຂ້າພະ
ເຈົ້າເຮັດໃຫ້ພວກທ່ານເຕັມໄປດ້ວຍຄວາມ
ສົງໃສ ແລະ ປະຫລາດໃຈ, ແລະ ດ້ວຍ
ຄວາມຄຽດແຄ້ນ.
9 ແຕ່ ຂ້າ ພະ ເຈົ້າ ຈົບ ຂ່າວ ຂອງ ຂ້າ ພະ
ເຈົ້າ; ແລະ ບໍ່ສຳຄັນເລີຍວ່າ ຂ້າພະເຈົ້າຈະ
ໄປໃສຖ້າຫາກເປັນໄປວ່າຂ້າພະເຈົ້າລອດ.
10 ແຕ່ຂ້າພະເຈົ້າຂໍບອກພວກທ່ານໄວ້
ເທົ່ານີ້, ສິ່ງໃດກໍຕາມທີ່ພວກທ່ານກະທຳ
ກັບຂ້າພະເຈົ້າຫລັງຈາກນີ້ ຍ່ອມເປັນຮູບ
*ກ*ແບບ ແລະ ຮູບລັກສະນະຂອງສິ່ງທີ່ຈະ
ມາເຖິງ.
11 ແລະ ບັດນີ້ຂ້າພະເຈົ້າຈະອ່ານ *ກ*ພຣະ
ບັນຍັດສ່ວນທີ່ຍັງເຫລືອຢູ່ຂອງພຣະເຈົ້າ,
ເພາະຂ້າພະເຈົ້າເຫັນວ່າມັນບໍ່ມີຂຽນໄວ້ໃນ
ໃຈຂອງພວກທ່ານເລີຍ; ຂ້າພະເຈົ້າເຫັນ
ວ່າ ພວກທ່ານໄດ້ສຶກສາ ແລະ ສິດສອນ
ຄວາມຊົ່ວຮ້າຍເປັນສ່ວນໃຫຍ່ຕະຫລອດຊີ
ວິດຂອງພວກທ່ານ.
12 ແລະ ບັດນີ້, ຈົ່ງຈື່ຈຳຄຳທີ່ຂ້າພະເຈົ້າ
ກ່າວກັບພວກທ່ານວ່າ: ທ່ານບໍ່ຄວນເຮັດ
ຮູບ ຫລື ຮູບຄວັດສະຫລັກອັນໃດໄວ້ສຳລັບ
ຕົນເອງ, ຫລື ຮູບສົມມຸດສິ່ງຂອງອັນໃດໃນ
ສະຫວັນ, ຫລື ສິ່ງຂອງໃນແຜ່ນດິນເບື້ອງ
ລຸ່ມ, ຫລື ສິ່ງຂອງຢູ່ໃນນ້ຳໃຕ້ແຜ່ນດິນ.
13 ແລະ ອີກຢ່າງໜຶ່ງ: ເຈົ້າຈະບໍ່ກາບ
ໄຫວ້ມັນ, ຫລື ຮັບໃຊ້ມັນ; ເພາະວ່າເຮົາ
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ
ເປັນພຣະເຈົ້າທີ່ອິດສາ, ຊຶ່ງຈະມາຢ້ຽມ
ຢາມຄວາມຊົ່ວຮ້າຍຂອງບັນພະບຸລຸດທັງ
ລູກຫລານ, ຈົນເຖິງຄົນລຸ້ນທີສາມ ແລະ ທີ
ສີ່ຂອງພວກເຂົາທີ່ກຽດຊັງເຮົາ;
14 ແລະ ຈະສະແດງຄວາມເມດຕາແກ່
ຫລາຍພັນຄົນທີ່ຮັກເຮົາ ແລະ ຮັກສາບັນ
ຍັດຂອງເຮົາ.
15 ເຈົ້າຈະບໍ່ໃຊ້ພຣະນາມຂອງພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າໄປໃນ
ທາງຊົ່ວຮ້າຍ; ເພາະພຣະຜູ້ເປັນເຈົ້າຈະບໍ່
ຖືວ່າ ຜູ້ທີ່ໃຊ້ພຣະນາມຂອງພຣະອົງໄປໃນ
ທາງຊົ່ວຮ້າຍບໍ່ມີຄວາມຜິດ.
16 ຈົ່ງລະນຶກເຖິງວັນ *ກ*ຊະບາໂຕ, ແລະ
ຮັກສາມັນໃຫ້ສັກສິດ.

5 *ກ* ອພຍ 34:29–35.
6 *ກ* ຄມພ ອຳນາດ.
7 *ກ* 1 ນຟ 16:2.
10 *ກ* ມຊຢ 17:13–19; ແອວ 25:10.
11 *ກ* ອພຍ 20:1–17.
16 *ກ* ຄມພ ວັນຊະບາໂຕ.

17 ເຈົ້າ ຈົ່ງ ເຮັດ ວຽກ ຫົກ ມື້, ແລະ ເຮັດ
ວຽກທັງໝົດຂອງເຈົ້າໃຫ້ແລ້ວ;
18 ແຕ່ມື້ທີເຈັດ, ວັນຊະບາໂຕຂອງພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ເຈົ້າ
ຈະບໍ່ທຳງານໃດໆ, ເຈົ້າພ້ອມທັງລູກຊາຍ
ຂອງເຈົ້າ, ທັງລູກສາວຂອງເຈົ້າ, ພ້ອມທັງ
ຄົນໃຊ້ຜູ້ຊາຍຂອງເຈົ້າ ແລະ ຄົນໃຊ້ຜູ້ຍິງ
ຂອງເຈົ້າ, ທັງຝູງງົວຂອງເຈົ້າ, ທັງຄົນແປກ
ໜ້າທີ່ຢູ່ໃນປະຕູບ້ານຂອງເຈົ້າ;
19 ເພາະ ວ່າ ພຣະ ຜູ້ ເປັນ ເຈົ້າ ໄດ້ ສ້າງ
ສະຫວັນ ແລະ ແຜ່ນ ດິນ ໂລກ, ແລະ
ທະເລ, ແລະ ທຸກສິ່ງທຸກຢ່າງ ຢູ່ໃນນັ້ນພາຍ
ໃນ [ກ]ຫົກ ມື້; ດັ່ງ ນັ້ນ ພຣະ ຜູ້ເປັນ ເຈົ້າ ຈຶ່ງ
ອວຍພອນວັນຊະບາໂຕ, ແລະ ເຮັດໃຫ້ມັນ
ສັກສິດ.
20 ຈົ່ງ [ກ]ນັບ ຖື ບິດາ ມານດາ ຂອງ ເຈົ້າ,
ເພື່ອວັນເວລາຂອງເຈົ້າຈະຍາວນານຢູ່ໃນ
ແຜ່ນດິນ ຊຶ່ງພຣະຜູ້ເປັນເຈົ້າ ອົງເປັນພຣະ
ເຈົ້າຂອງເຈົ້າປະທານໃຫ້.
21 ເຈົ້າຈະບໍ່ [ກ]ຂ້າກັນ.
22 ເຈົ້າຈະບໍ່ [ກ]ຫລິ້ນຊູ້. ເຈົ້າຈະບໍ່ [ຂ]ລັກ.
23 ເຈົ້າ ຈະ ບໍ່ເປັນ [ກ]ພະຍານ ເທັດ ແລະ
ຫາຄວາມໃສ່ເພື່ອນບ້ານຂອງເຈົ້າ.
24 ເຈົ້າ ຈະບໍ່ [ກ]ລັກ ໂລບ ເອົາບ້ານ ເຮືອນ
ຂອງ ເພື່ອນບ້ານຂອງ ເຈົ້າ, ເຈົ້າຈະບໍ່ລັກ
ໂລບ ເອົາ ເມຍຂອງເພື່ອນບ້ານຂອງເຈົ້າ,
ຫລື ຄົນໃຊ້ຜູ້ຊາຍຂອງເຂົາ, ຫລື ຄົນໃຊ້ຜູ້
ຍິງຂອງເຂົາ, ຫລື ງົວຂອງເຂົາ, ຫລື ລໍຂອງ
ເຂົາ, ຫລື ສິ່ງຂອງໃດໆທີ່ເປັນຂອງເພື່ອນ
ບ້ານຂອງເຈົ້າ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກອະບິນາໄດກ່າວຂໍ້ຄວາມເຫລົ່ານີ້ຈົບ
ແລ້ວ ເພິ່ນກໍກ່າວກັບພວກເຂົາວ່າ: ພວກ
ທ່ານໄດ້ສິດສອນຜູ້ຄົນພວກນີ້ໃຫ້ພວກເຂົາ
ຍຶດຖື ແລະ ເຮັດຕາມສິ່ງເຫລົ່ານີ້ທັງໝົດ
ເພື່ອຈະໄດ້ຮັກສາພຣະບັນຍັດເຫລົ່ານີ້ຫລື
ບໍ່?
26 ຂ້າ ພະ ເຈົ້າ ກ່າວ ກັບ ພວກ ທ່ານ ວ່າ,
ບໍ່ ເລີຍ; ເພາະ ວ່າ ຖ້າ ຫາກ ພ ວກ ທ່ານ ສິດ
ສອນ, ພຣະຜູ້ເປັນເຈົ້າຄົງບໍ່ໃຫ້ຂ້າພະເຈົ້າ
ອອກມາ ແລະ ທຳນາຍເຖິງຄວາມຊົ່ວກ່ຽວ
ກັບຜູ້ຄົນພວກນີ້ດອກ.
27 ແລະ ບັດນີ້ພວກທ່ານເວົ້າວ່າ ຄວາມ
ລອດ ມາ ເຖິງ ໂດຍ ທາງ [ກ]ກົດ ຂອງ ໂມເຊ.
ຂ້າພະເຈົ້າກ່າວກັບພວກທ່ານວ່າມັນເປັນ
ການເໝາະສົມທີ່ພວກທ່ານຈະຮັກສາກົດ
ຂອງ ໂມເຊ ໄວ້; ແຕ່ ຂ້າພະ ເຈົ້າກ່າວ ກັບ
ພວກທ່ານວ່າ ເວລາຈະມາເຖິງເມື່ອມັນບໍ່
ສົມຄວນທີ່ຈະຮັກສາກົດຂອງໂມເຊ [ຂ]ອີກຕໍ່
ໄປ.
28 ແລະ ຍິ່ງ ໄປ ກວ່າ ນັ້ນ, ຂ້າ ພະ ເຈົ້າ
ກ່າວກັບພວກທ່ານວ່າ, [ກ]ຄວາມລອດບໍ່ໄດ້
ມາເຖິງໂດຍທາງ [ຂ]ກົດຂອງໂມເຊແຕ່ຝ່າຍ
ດຽວ; ແລະ ຖ້າຫາກບໍ່ແມ່ນ [ຄ]ການຊົດໃຊ້
ຊຶ່ງພຣະເຈົ້າພຣະອົງເອງຈະກະທຳໄປເພື່ອ
ບາບ ແລະ ຄວາມຊົ່ວ ຮ້າຍຂອງມະນຸດ
ຂອງພຣະອົງແລ້ວ, ພວກເຂົາກໍຕ້ອງຕາຍ
ຢ່າງຫລີກລ້ຽງບໍ່ໄດ້, ທັງໆທີ່ກົດຂອງໂມເຊ
ມີຢູ່.
29 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ

19 ກ ປຖກ 1:31.
20 ກ ມຣກ 7:10.
21 ກ ມທ 5:21–22;
ຄພ 42:18.
ຄນພ ຄາດຕະກຳ,
ການຄາດຕະກຳ.
22 ກ ຄນພ ຫລິ້ນຊູ້.
ຂ ຄນພ ລັກ, ການລັກ.
23 ກ ສພສ 24:28.
ຄນພ ຕົວະ.
24 ກ ຄນພ ໂລບ, ຄວາມໂລບ.
27 ກ ຄນພ ກົດຂອງໂມເຊ.
ຂ 3 ນຟ 9:19–20; 15:4–5.
28 ກ ຄລຕ 2:16.
ຄນພ ໄຖ່, ການໄຖ່, ຖືກໄຖ່;
ລອດ, ຄວາມລອດ.
ຂ ຄລຕ 2:21;
ມຊຢ 3:14–15;
ແອວ 25:15–16.
ຄ ຄນພ ຊົດໃຊ້, ການຊົດໃຊ້.

ທ່ານວ່າ ສົມຄວນແລ້ວທີ່ຈະມີກົດປະທານ
ໃຫ້ລູກຫລານຂອງອິດສະຣາເອນ, ແທ້ຈິງ
ແລ້ວ, ເປັນກົດທີ່ [ກ]ເຄັ່ງຄັດທີ່ສຸດ; ເພາະ
ພວກເຂົາເປັນຄົນແຂງຄໍ ແລະ [ຂ]ໄວທີ່ຈະ
ເຮັດຄວາມຊົ່ວຮ້າຍ, ແລະ ຊັກຊ້າທີ່ຈະລະ
ນຶກເຖິງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ;

30 ສະນັ້ນ ຈຶ່ງມີ [ກ]ກົດປະທານໃຫ້ພວກ
ເຂົາ, ແທ້ຈິງແລ້ວ, ກົດການປະຕິບັດ ແລະ
[ຂ]ພິທີການອັນເປັນກົດ ຊຶ່ງພວກເຂົາຕ້ອງ
[ຄ]ຍຶດຖືຢ່າງເຄັ່ງຄັດທຸກມື້, ເພື່ອໃຫ້ພວກ
ເຂົາລະນຶກເຖິງພຣະເຈົ້າ ແລະ ໜ້າທີ່ຂອງ
ພວກເຂົາຕໍ່ພຣະອົງ.

31 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ທັງໝົດນີ້ເປັນ [ກ]ແບບໄວ້ສຳລັບ
ສິ່ງທີ່ຈະມາເຖິງ.

32 ແລະ ບັດນີ້, ພວກເຂົາເຂົ້າໃຈກົດ
ເຫລົ່ານີ້ແລ້ວບໍ? ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ບໍ່ເລີຍ, ພວກເຂົາບໍ່ເຂົ້າໃຈກົດ
ທຸກຄົນ; ແລະ ນີ້ເພາະຄວາມແຂງກະດ້າງ
ຂອງໃຈຂອງພວກເຂົາ; ເພາະວ່າພວກ
ເຂົາບໍ່ເຂົ້າໃຈວ່າ ບໍ່ມີຜູ້ໃດເລີຍຈະລອດໄດ້
[ກ]ເວັ້ນເສຍແຕ່ໂດຍການໄຖ່ຂອງພຣະເຈົ້າ
ເທົ່ານັ້ນ.

33 ເພາະຈົ່ງເບິ່ງ, ໂມເຊບໍ່ໄດ້ທຳນາຍ
ແກ່ພວກເຂົາກ່ຽວກັບການສະເດັດມາຂອງ
ພຣະເມຊີອາ, ແລະ ວ່າພຣະເຈົ້າຈະໄຖ່
ຜູ້ຄົນຂອງພຣະອົງບໍ? ແທ້ຈິງແລ້ວ, ເຖິງ
ແມ່ນສາດສະດາ [ກ]ທັງປວງທີ່ທຳນາຍໄວ້
ນັບແຕ່ການເລີ່ມຕົ້ນຂອງໂລກມາ—ພວກ
ເພິ່ນກໍໄດ້ເວົ້າເຖິງເລື່ອງເຫລົ່ານີ້ ບໍ່ຫລາຍ
ກໍໜ້ອຍແມ່ນບໍ?

34 ພວກເພິ່ນບໍ່ໄດ້ກ່າວໄວ້ບໍວ່າ [ກ]ພຣະ
ເຈົ້າພຣະອົງເອງຈະສະເດັດມາໃນບັນດາ
ລູກຫລານມະນຸດ, ແລະ ຮັບເອົາຮູບລັກ
ສະນະຂອງມະນຸດ, ແລະ ຈະສະເດັດໄປ
ໂດຍອຳນາດອັນຍິ່ງໃຫຍ່ຕາມພື້ນແຜ່ນດິນ
ໂລກ?

35 ແທ້ຈິງແລ້ວ, ພວກເພິ່ນບໍ່ໄດ້ກ່າວໄວ້
ບໍວ່າ ພຣະອົງຈະເຮັດໃຫ້ເກີດ [ກ]ການຟື້ນ
ຄືນຊີວິດຂອງຄົນຕາຍ, ແລະ ວ່າພຣະອົງ
ຈະຖືກຂົ່ມເຫັງ ແລະ ຈະເປັນທຸກ?

## ບົດທີ 14

*ເອຊາຢາກ່າວກ່ຽວກັບພຣະເມຊີອາ—ຄວາມຕ່ຳຕ້ອຍ ແລະ ຄວາມເຈັບປວດຂອງພຣະເມຊີອາຖືກຕັ້ງໄວ້ແລ້ວ—ພຣະອົງຈະເຮັດໃຫ້ຈິດວິນຍານຂອງພຣະອົງຖວາຍເພື່ອບາບ ແລະ ວິງວອນແທນຜູ້ລ່ວງລະເມີດ—ປຽບທຽບກັບເອຊາຢາ 53. ປະມານ 148 ປີກ່ອນ ຄ.ສ.*

1 ແທ້ຈິງແລ້ວ, ເອຊາຢາບໍ່ໄດ້ເວົ້າບໍວ່າ:
ແມ່ນໃຜຈະເຊື່ອໃນສິ່ງທີ່ພວກເຮົາລາຍ
ງານໄປ, ແລະ ພຣະຫັດຂອງພຣະຜູ້ເປັນ
ເຈົ້າສະແດງຕໍ່ຜູ້ໃດ?

2 ເພາະວ່າເພິ່ນຈະເຕີບໂຕໃຫຍ່ຂຶ້ນຕໍ່
ໜ້າເພິ່ນຄືກັນກັບຕົ້ນໄມ້ອ່ອນ, ແລະ ຮາກ
ຈໍ່ອອກຈາກດິນແຫ້ງ; ເພິ່ນບໍ່ມີຮູບລັກສະ
ນະ ແລະ ຄວາມງາມໃດໆ; ແລະ ເມື່ອພວກ
ເຮົາເຫັນເພິ່ນວ່າ ບໍ່ມີຄວາມງາມເລີຍ ພວກ
ເຮົາກໍບໍ່ປາດຖະໜາເພິ່ນ.

29 *ກ* ຢຊ 1:7–8.
*ຂ* ແອວ 46:8.
30 *ກ* ອພຍ 20.
*ຂ* ຄມພ ພິທີການ.
*ຄ* ຢຄ 4:5.
31 *ກ* ມຊຢ 16:14;
ແອວ 25:15.
ຄມພ ສັນຍາລັກ.
32 *ກ* 2 ນຟ 25:23–25.
33 *ກ* 1 ນຟ 10:5;
ຢຄ 4:4; 7:11.
34 *ກ* ມຊຢ 7:27; 15:1–3.
ຄມພ ພຣະເຈົ້າ,
ຝ່າຍພຣະເຈົ້າ.
35 *ກ* ອຊຢ 26:19;
2 ນຟ 2:8.

3 ເພິ່ນ ຈະ ເປັນ ຜູ້ ທີ່ ຖືກ ໝິ່ນ ປະ ໝາດ
ແລະ ຖືກຜູ້ຄົນປະຕິເສດ, ແລະ ເປັນຜູ້ມີ
ຄວາມໂສກເສົ້າ ແລະ ສະຫລົດໃຈຄືກັບວ່າ
ພວກເຮົາໜີໜ້າຈາກເພິ່ນ; ເພິ່ນຈະເປັນ
ຄົນທີ່ຖືກໝິ່ນປະໝາດ, ແລະ ພວກເຮົາບໍ່
ນັບຖືເພິ່ນ.
4 ແນ່ ນອນ ເພິ່ນ ຈະ [ກ]ແບກ ທາບ ເອົາ
[ຂ]ຄວາມໂສກເສົ້າ, ແລະ ຄວາມເສົ້າສະ
ຫລົດ ໃຈ ຂອງພວກເຮົາໄວ້; ແຕ່ປານນັ້ນ
ພວກເຮົາຍັງຖືວ່າເພິ່ນຖືກຕີ, ຖືກລົງໂທດ
ຈາກພຣະເຈົ້າ, ແລະ ເປັນທຸກ.
5 ແຕ່ ວ່າ ເພິ່ນ ໄດ້ ຮັບ ບາດ ເຈັບ ເພາະ
[ກ]ການລ່ວງລະເມີດຂອງພວກເຮົາ, ເພິ່ນ
ມີຮອຍຟົກຊ້ຳ ເພາະຄວາມຊົ່ວຮ້າຍຂອງ
ພວກເຮົາ; ການຕີສອນເພື່ອສັນຕິສຸກຂອງ
ພວກເຮົາຢູ່ກັບເພິ່ນ; ແລະ ດ້ວຍຮອຍຖືກຕີ
ຂອງເພິ່ນ ພວກເຮົາຈຶ່ງຖືກ [ຂ]ປິ່ນປົວໃຫ້ດີ.
6 ພວກ ເຮົາ ທັງ ໝົດ, ເໝືອນດັ່ງ [ກ]ໂຕ
ແກະ ໄດ້ຫລົງທາງໄປ; ພວກເຮົາ ໄດ້ໄປ
ຕາມເສັ້ນທາງຂອງໃຜລາວ; ແລະ ພຣະ
ຜູ້ເປັນເຈົ້າໄດ້ວາງຄວາມຊົ່ວຮ້າຍທັງໝົດ
ຂອງພວກເຮົາໄວ້ກັບພຣະອົງ.
7 ເພິ່ນ ຈະຖືກ ຂົ່ມເຫັງ, ແລະ ເພິ່ນຈະ
ທົນຕໍ່ຄວາມເປັນທຸກ, ແຕ່ປານນັ້ນ [ກ]ເພິ່ນ
ຍັງບໍ່ເປີດປາກຂອງເພິ່ນເລີຍ; ເພິ່ນຖືກນຳ
ເອົາໄປໂຮງຂ້າສັດຄືກັນກັບ [ຂ]ລູກແກະ,
ແລະ ຄືກັບ ໂຕແກະທີ່ຢືນຢູ່ເສີຍໆຕໍ່ໜ້າ
ຄົນທີ່ຕັດຂົນຂອງມັນ ແລະ ເພິ່ນກໍບໍ່ເປີດ
ປາກເລີຍ.
8 ເພິ່ນຖືກເອົາອອກຈາກຄຸກ ແລະ ຈາກ
ການ ຕັດ ສິນ; ແລະ ແມ່ນໃຜ ຈະປະກາດ
ຊົ່ວ ລຸ້ນ ຄົນຂອງເພິ່ນ? ເພາະວ່າ ເພິ່ນຖືກ
ຕັດ ອອກ ຈາກແຜ່ນດິນ ຂອງຄົນ ມີຊີວິດ
ຢູ່; ເພາະເພິ່ນຖືກຕີເພື່ອການລ່ວງລະເມີດ
ຂອງຜູ້ຄົນຂອງເຮົາ.
9 ແລະ ເພິ່ນຖືກຝັງໄວ້ນຳຄົນຊົ່ວ, ແລະ
ນຳພວກ [ກ]ເສດຖີ; ທັງໆທີ່ເພິ່ນບໍ່ໄດ້ເຮັດ
[ຂ]ຄວາມຊົ່ວ ແລະ ບໍ່ມີຄວາມຫລອກລວງ
ໃດໆຢູ່ໃນປາກຂອງເພິ່ນເລີຍ.
10 ເຖິງຢ່າງໃດກໍຕາມ ພຣະຜູ້ເປັນເຈົ້າ
ຍັງພໍພຣະໄທປ່ອຍໃຫ້ເພິ່ນຟົກຊ້ຳ; ພຣະ
ອົງໄດ້ເຮັດໃຫ້ເພິ່ນໂສກເສົ້າ; ເວລາພຣະ
ອົງຈະເຮັດໃຫ້ຈິດວິນຍານຂອງເພິ່ນເປັນ
ເຄື່ອງຖວາຍເພື່ອບາບ ເພິ່ນຈະເຫັນ [ກ]ລູກ
ຫລານຂອງເພິ່ນ, ພຣະອົງຈະໃຫ້ວັນເວລາ
ຂອງເພິ່ນຍືດຍາວ, ແລະ ຄວາມພໍພຣະໄທ
ຂອງພຣະຜູ້ເປັນເຈົ້າຈະຮຸ່ງເຮືອງໃນວັນ
ຂອງເພິ່ນ.
11 ພຣະ ອົງ ຈະ ເບິ່ງ ຄວາມ ເຈັບ ປວດ
ຂອງ ຈິດ ວິນຍານຂອງເພິ່ນ, ແລະ ຈະພໍ
ພຣະໄທ; ໂດຍຄວາມຮູ້ຂອງເພິ່ນ ຜູ້ຮັບໃຊ້
ທີ່ຊອບທຳຂອງເຮົາຈະຮັບຮອງຄົນຢ່າງ
ຫລວງຫລາຍ; ເພາະເພິ່ນຈະ [ກ]ແບກຄວາມ
ຊົ່ວຮ້າຍຂອງຄົນເຫລົ່ານັ້ນ.
12 ສະນັ້ນ ເຮົາຈະແບ່ງສ່ວນໜຶ່ງໃຫ້ເພິ່ນ
ກັບຄົນທີ່ຍິ່ງໃຫຍ່, ແລະ ເພິ່ນຈະແບ່ງຊັບ
ທີ່ປຸ້ນກັບຄົນທີ່ແຂງແຮງ; ເພາະເພິ່ນເທ
ຈິດວິນຍານຂອງເພິ່ນອອກຈົນເຖິງຄວາມ
ຕາຍ; ແລະ ເພິ່ນຖືກນັບເຂົ້າຢູ່ກັບຄົນທີ່
ລ່ວງລະເມີດ; ແລະ ເພິ່ນແບກບາບຂອງ

**14** 4*ກ* ແອວ 7:11–12.
*ຂ* ມທ 8:17.
5*ກ* ມຊຢ 15:9;
ແອວ 11:40.
*ຂ* 1 ປຕ 2:24–25.
6*ກ* ມທ 9:36;
2 ນຟ 28:14;
ແອວ 5:37.
7*ກ* ມຣກ 15:3.
ຄມພ ພຣະເຢຊູຄຣິດ.
*ຂ* ຄມພ ປັດສະຄາ; ພຣະ
ເມສານ້ອຍຂອງພຣະເຈົ້າ.
9*ກ* ມທ 27:57–60;
ມຣກ 15:27, 43–46.
ຄມພ ໂຢເຊັບແຫ່ງ
ອາຣີມາທາຍ.
*ຂ* ຢຣ 19:4.
10*ກ* ມຊຢ 15:10–13.
11*ກ* ລລວ 16:21–22;
1 ປຕ 3:18;
ຄພ 19:16–19.

ຄົນຢ່າງຫລວງຫລາຍໄວ້, ແລະ [ກ]ວິງວອນແທນຄົນທີ່ລ່ວງລະເມີດ.

## ບົດທີ 15

*ພຣະເຢຊູເປັນທັງພຣະບິດາ ແລະ ພຣະບຸດໄດ້ແນວໃດ—ພຣະອົງຈະວິງວອນແທນ ແລະ ແບກຫາບການລ່ວງລະເມີດຂອງຜູ້ຄົນຂອງພຣະອົງ—ພວກເຂົາກັບສາດສະດາຜູ້ບໍລິສຸດທັງໝົດເປັນລູກຫລານຂອງພຣະອົງ—ພຣະອົງເຮັດໃຫ້ເກີດການຟື້ນຄືນຊີວິດ—ເດັກນ້ອຍໆມີຊີວິດນິລັນດອນ. ປະມານ 148 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ອະບີນາໄດກ່າວກັບພວກເຂົາວ່າ: ຂ້າພະເຈົ້າຢາກໃຫ້ພວກທ່ານເຂົ້າໃຈວ່າ [ກ]ພຣະເຈົ້າພຣະອົງເອງຈະສະເດັດມາຫາບັນດາລູກຫລານມະນຸດ ແລະ ຈະ [ຂ]ໄຖ່ຜູ້ຄົນຂອງພຣະອົງ.

2 ແລະ ຍ້ອນວ່າພຣະອົງຈະໄດ້ [ກ]ຢູ່ໃນເນື້ອໜັງ ພຣະອົງຈະຖືກເອີ້ນວ່າ ພຣະບຸດຂອງພຣະເຈົ້າ, ແລະ ຂຶ້ນກັບເນື້ອໜັງ ແລະ ຕາມພຣະປະສົງຂອງ [ຂ]ພຣະບິດາ, ຈຶ່ງເປັນທັງພຣະບິດາ ແລະ ພຣະບຸດ—

3 ພຣະບິດາ, [ກ]ເພາະວ່າພຣະອົງ [ຂ]ແຕ່ງຂຶ້ນໂດຍອຳນາດຂອງພຣະເຈົ້າ; ແລະ ພຣະບຸດ, ຍ້ອນວ່າມີຮ່າງກາຍທາງເນື້ອໜັງ; ຈຶ່ງເປັນທັງພຣະບຸດ ແລະ ພຣະບິດາແນວນັ້ນ—

4 ແລະ ທັງສອງພຣະອົງເປັນ [ກ]ພຣະເຈົ້າອົງດຽວ, ແທ້ຈິງແລ້ວ, ເປັນ [ຂ]ພຣະບິດາ [ຄ]ຜູ້ສະຖິດນິລັນດອນແຫ່ງສະຫວັນ ແລະ ແຜ່ນດິນໂລກ.

5 ແລະ ເນື້ອໜັງຈຶ່ງຂຶ້ນຢູ່ກັບພຣະວິນຍານດັ່ງນັ້ນ, ຫລື ພຣະບຸດກັບພຣະບິດາ, ໂດຍເປັນພຣະຜູ້ເປັນເຈົ້າອົງດຽວ ທີ່ [ກ]ທົນກັບການລໍ້ລວງ, ແລະ ບໍ່ຍອມຜ່າຍແພ້ຕໍ່ການລໍ້ລວງ, ແຕ່ພຣະອົງຍອມທົນທຸກຕໍ່ການເຍາະເຍີ້ຍ, ແລະ ການ [ຂ]ຂ້ຽນຕີ, ແລະ ຖືກຂັບໄລ່ອອກໄປ, ແລະ ຖືກຜູ້ຄົນຂອງພຣະອົງ [ຄ]ປະຕິເສດ.

6 ແລະ ຫລັງຈາກສິ່ງທັງໝົດນີ້, ຫລັງຈາກໄດ້ເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງໃນບັນດາລູກຫລານມະນຸດແລ້ວ, ພຣະອົງຈະຖືກນຳໄປ, ແທ້ຈິງແລ້ວ, ແມ່ນ [ກ]ດັ່ງເອຊາຢາກ່າວເໝືອນດັ່ງໂຕແກະທີ່ຢືນເສີຍຢູ່ຕໍ່ໜ້າຄົນຕັດຂົນຂອງມັນສັນໃດ, ພຣະອົງຈະບໍ່ [ຂ]ເປີດພຣະໂອດຂອງພຣະອົງສັນນັ້ນ.

7 ແທ້ຈິງແລ້ວ, ເຖິງປານນັ້ນພຣະອົງຍັງຖືກນຳໄປ [ກ]ຄຶງໄວ້ເທິງໄມ້ກາງແຂນ ແລະ ຖືກຂ້າ, ແລະ ເນື້ອໜັງຂອງພຣະອົງຈະກັບກາຍມາເປັນຄວາມຕາຍ, ເພື່ອ

---

12 *ກ* 2 ນຟ 2:9; ມຊຢ 15:8; ມຣນ 7:27–28.
**15** 1 *ກ* 1 ຕມທ 3:16; ມຊຢ 13:33–34. ຄມພ ພຣະເຢຊູຄຣິດ.
*ຂ* ຄມພ ໄຖ່, ການໄຖ່, ຖືກໄຖ່.
2 *ກ* ມຊຢ 3:5; 7:27; ແອວ 7:9–13.
*ຂ* ອຊຢ 64:8; ຢຮ 10:30; 14:8–10; ມຊຢ 5:7; ແອວ 11:38–39; ອທ 3:14.
3 *ກ* ຄພ 93:4.
*ຂ* ລກ 1:31–33; ມຊຢ 3:8–9; ແອວ 7:10; 3 ນຟ 1:14.
4 *ກ* ພບຍ 6:4; ຢຮ 17:20–23. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* ແອວ 11:39.
*ຄ* ມຊຢ 3:8; ຣລມ 14:12; 3 ນຟ 9:15; ອທ 4:7.
5 *ກ* ລກ 4:2; ຮຣ 4:14–15.
*ຂ* ຢຮ 19:1.
*ຄ* ມຣກ 8:31; ລກ 17:25.
6 *ກ* ອຊຢ 53:7.
*ຂ* ລກ 23:9; ຢຮ 19:9; ມຊຢ 14:7.
7 *ກ* ຄມພ ຄຶງ, ການຄຶງ.

[ຂ]ປະສົງຂອງພຣະບຸດຈະຖືກກືນລົງໄປໃນ
ພຣະປະສົງຂອງພຣະບິດາ.

8 ແລະ ພຣະເຈົ້າໄດ້ເຮັດໃຫ້ [ກ]ສາຍ
ຮັດແຫ່ງຄວາມຕາຍຂາດອອກ, ມີ [ຂ]ໄຊ
ຊະນະຕໍ່ຄວາມຕາຍ, ປະທານອຳນາດໃຫ້
ພຣະບຸດເພື່ອ [ຄ]ວິງວອນແທນລູກຫລານ
ມະນຸດ—

9 ໂດຍທີ່ໄດ້ສະເດັດຂຶ້ນໄປສະຫວັນ,
ໂດຍທີ່ມີອຸທອນແຫ່ງຄວາມເມດຕາສົງ
ສານ; ເຕັມໄປດ້ວຍຄວາມກະລຸນາ, ຮັກ
ຫອມລູກຫລານມະນຸດ ຊຶ່ງຢູ່ລະຫວ່າງ
ພວກເຂົາ; ແລະ ຄວາມຍຸດຕິທຳເຮັດ
ໃຫ້ສາຍຮັດແຫ່ງຄວາມຕາຍຂາດອອກ;
ຮັບເອົາຄວາມຊົ່ວຮ້າຍ ແລະ ການລ່ວງ
ລະເມີດຂອງພວກເຂົາມາໄວ້ນຳ [ກ]ພຣະ
ອົງເອງ, ແລະ ໄຖ່ພວກເຂົາ, ແລະ [ຂ]ຕອບ
ສະໜອງຄວາມຮຽກຮ້ອງຕ້ອງການຂອງ
ຄວາມຍຸດຕິທຳ.

10 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ແມ່ນໃຜຈະປະກາດຊົ່ວລຸ້ນຄົນ
ຂອງພຣະອົງໄດ້? ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ເວລາທີ່ພຣະອົງເຮັດໃຫ້
ຈິດວິນຍານຂອງພຣະອົງເປັນເຄື່ອງຖວາຍ
ເພື່ອບາບ ແລ້ວພຣະອົງຈະຫລຽວເຫັນ
[ກ]ລູກຫລານຂອງພຣະອົງ. ແລະ ບັດນີ້ພວກ
ທ່ານຈະວ່າແນວໃດ? ແລະ ຜູ້ໃດຈະເປັນ
ລູກຫລານຂອງພຣະອົງ?

11 ຈົ່ງ ເບິ່ງ ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ຜູ້ໃດກໍຕາມທີ່ໄດ້ຍິນຄຳເວົ້າຂອງ
[ກ]ສາດສະດາ, ແທ້ຈິງແລ້ວ, ສາດສະດາ
ຜູ້ບໍລິສຸດທັງໝົດ ຊຶ່ງໄດ້ທຳນາຍກ່ຽວກັບ
ການສະເດັດມາຂອງພຣະຜູ້ເປັນເຈົ້າ—
ຂ້າພະເຈົ້າກ່າວກັບພວກທ່ານວ່າ, ຄົນທັງ
ຫລາຍຜູ້ທີ່ເຊື່ອຟັງຄຳເວົ້າຂອງພວກເພິ່ນ,
ແລະ ເຊື່ອວ່າພຣະຜູ້ເປັນເຈົ້າຈະໄຖ່ຜູ້ຄົນ
ຂອງພຣະອົງ, ແລະ ລໍຖ້າມື້ນັ້ນເພື່ອການ
ປົດບາບຂອງພວກເຂົາ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ, ຄົນພວກນີ້ຄືລູກຫລານ
ຂອງພຣະອົງ, ຫລື ວ່າທາຍາດຂອງ [ຂ]ອາ
ນາຈັກຂອງພຣະເຈົ້າ.

12 ເພາະວ່າຄົນພວກນີ້ຄືຄົນທີ່ [ກ]ພຣະ
ອົງຈະແບກບາບຂອງພວກເຂົາໄວ້; ແລະ
ຄົນພວກນີ້ຄືຄົນທີ່ພຣະອົງຈະສິ້ນພຣະ
ຊົນແທນເພື່ອໄຖ່ພວກເຂົາອອກຈາກການ
ລ່ວງລະເມີດຂອງພວກເຂົາ. ແລະ ບັດນີ້,
ພວກເຂົາບໍ່ແມ່ນລູກຫລານຂອງພຣະອົງ
ບໍ?

13 ແທ້ຈິງແລ້ວ, ສາດສະດາທຸກຄົນບໍ່ໄດ້
ເປີດປາກທຳນາຍບໍ, ຊຶ່ງບໍ່ໄດ້ຕົກຢູ່ໃນການ
ລ່ວງລະເມີດ, ຂ້າພະເຈົ້າໝາຍເຖິງສາດ
ສະດາຜູ້ບໍລິສຸດທັງໝົດນັບແຕ່ການເລີ່ມ
ຕົ້ນຂອງໂລກ? ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ພວກເພິ່ນແມ່ນລູກຫລານຂອງ
ພຣະອົງ.

14 ແລະ ຄົນເຫລົ່ານີ້ຄື ຜູ້ [ກ]ປະກາດສັນຕິ
ສຸກ ແລະ ນຳເອົາຂ່າວປະເສີດຂອງຄວາມ
ດີມາ, ຜູ້ປະກາດຄວາມລອດ; ແລະ ກ່າວ
ກັບຊີໂອນວ່າ: ພຣະເຈົ້າຊົງປົກຄອງ!

---

7 ຂ ລກ 22:42;
ຢຮ 6:38;
3 ນຟ 11:11.
8 ກ ມຊຢ 16:7;
ແອວ 22:14.
ຂ ຮສອ 13:14;
1 ກຣທ 15:55–57.
ຄ 2 ນຟ 2:9.
9 ກ ອຊຢ 53;
ມຊຢ 14:5–12.
ຂ ຄນພ ຊົດໃຊ້, ການຊົດໃຊ້.
10 ກ ອຊຢ 53:10;
ມຊຢ 5:7; 27:25;
ມຣນ 7:19.
11 ກ ຄພ 84:36–38.
ຂ ຄນພ ລອດ, ຄວາມລອດ;
ອານາຈັກຂອງພຣະເຈົ້າ
ຫລື ອານາຈັກສະຫວັນ.
12 ກ ມຊຢ 14:12;
ແອວ 7:13; 11:40–41.
14 ກ ອຊຢ 52:7;
ຣມ 10:15;
1 ນຟ 13:37;
ມຊຢ 12:21–24.
ຄນພ ວຽກງານເຜີຍແຜ່.

15 ແລະ ໂອ້ ຕີນຂອງຜູ້ທີ່ຢູ່ເທິງພູນັ້ນ
ງາມພຽງໃດ!
16 ແລະ ອີກເທື່ອໜຶ່ງ, ຕີນຂອງຜູ້ທີ່ຢູ່ເທິງ
ພູ ຊຶ່ງປະກາດສັນຕິສຸກນັ້ນງາມພຽງໃດ!
17 ແລະ ອີກເທື່ອໜຶ່ງ, ຕີນຂອງຜູ້ທີ່ຢູ່
ເທິງພູ ຊຶ່ງປະກາດສັນຕິສຸກຕັ້ງແຕ່ເວລາ
ນັ້ນມາງາມພຽງໃດ, ແທ້ຈິງແລ້ວ, ຕັ້ງແຕ່
ເວລານີ້ ແລະ ຕະຫລອດໄປ!
18 ແລະ ຈົ່ງເບິ່ງຂ້າພະເຈົ້າກ່າວກັບ
ພວກທ່ານວ່າ, ນີ້ຍັງບໍ່ທັນໝົດ, ເພາະວ່າ
ໂອ້ [ກ]ພຣະບາດຂອງຜູ້ທີ່ຢູ່ເທິງພູທີ່ນຳຂ່າວ
ປະເສີດມານັ້ນງາມພຽງໃດ, ນັ້ນຄືຜູ້ກໍ່ຕັ້ງ
[ຂ]ສັນຕິສຸກ, ແທ້ຈິງແລ້ວ, ແມ່ນພຣະຜູ້ເປັນ
ເຈົ້າ, ຜູ້ໄດ້ໄຖ່ຜູ້ຄົນຂອງພຣະອົງ; ແທ້ຈິງ
ແລ້ວ, ພຣະອົງຜູ້ປະທານຄວາມລອດໃຫ້
ແກ່ຜູ້ຄົນຂອງພຣະອົງ;
19 ເພາະວ່າ ຖ້າຫາກບໍ່ມີການໄຖ່ທີ່ພຣະ
ອົງເຮັດເພື່ອຜູ້ຄົນຂອງພຣະອົງ ຊຶ່ງຖືກຕຽມ
ໄວ້ແລ້ວຕັ້ງແຕ່ [ກ]ການວາງຮາກຖານຂອງ
ໂລກນັ້ນ, ຂ້າພະເຈົ້າກ່າວກັບພວກທ່ານ
ວ່າ, ຖ້າຫາກບໍ່ມີການໄຖ່ນີ້ແລ້ວ, ມະນຸດທັງ
ໝົດ [ຂ]ຕ້ອງຕາຍ.
20 ແຕ່ຈົ່ງເບິ່ງ, ສາຍຮັດແຫ່ງຄວາມຕາຍ
ຈະຂາດອອກ ແລະ ພຣະບຸດຈະປົກຄອງ
ແລະ ມີອຳນາດເໜືອກວ່າຄວາມຕາຍ;
ສະນັ້ນ, ພຣະອົງຈຶ່ງເຮັດໃຫ້ເກີດການຟື້ນ
ຄືນຊີວິດຂອງຄົນຕາຍມີຂຶ້ນ.
21 ແລະ ການຟື້ນຄືນຊີວິດຈະເກີດຂຶ້ນ,
ແມ່ນ [ກ]ການຟື້ນຄືນຊີວິດຄັ້ງທຳອິດ; ແທ້ຈິງ
ແລ້ວ, ແມ່ນການຟື້ນຄືນຊີວິດຂອງຜູ້ທີ່ເປັນ
ມາແລ້ວ, ແລະ ທີ່ເປັນ, ແລະ ທີ່ຈະເປັນ
ແມ່ນແຕ່ຈົນເຖິງການຟື້ນຄືນພຣະຊົນຂອງ
ພຣະຄຣິດ—ເພາະເຊັ່ນນີ້ພຣະອົງຈະຊົງ
ໄດ້ຮັບເອີ້ນ.
22 ແລະ ບັດນີ້ການຟື້ນຄືນຊີວິດຂອງ
ສາດສະດາທັງໝົດ, ແລະ ຄົນທັງຫລາຍທີ່
ເຊື່ອຖືໃນຄຳເວົ້າຂອງພວກເພິ່ນ, ຫລື ຄົນ
ທັງຫລາຍທີ່ໄດ້ຮັກສາພຣະບັນຍັດຂອງ
ພຣະເຈົ້າ, ຈະອອກມາຫາການຟື້ນຄືນຊີ
ວິດຄັ້ງທຳອິດ; ສະນັ້ນ, ພວກເຂົາຈຶ່ງມີການ
ຟື້ນຄືນຊີວິດຄັ້ງທຳອິດ.
23 ພວກເຂົາຈະຖືກຍົກຂຶ້ນໃຫ້ [ກ]ຢູ່ກັບ
ພຣະເຈົ້າຜູ້ໄຖ່ພວກເຂົາ; ດ້ວຍວິທີນີ້ພວກ
ເຂົາຈຶ່ງຈະມີຊີວິດນິລັນດອນໂດຍພຣະ
ຄຣິດຜູ້ເຮັດໃຫ້ສາຍຮັດແຫ່ງຄວາມຕາຍ
ນັ້ນ [ຂ]ຂາດອອກ.
24 ແລະ ຄົນເຫລົ່ານີ້ຄືຄົນທີ່ມີສ່ວນໃນ
ການຟື້ນຄືນຊີວິດຄັ້ງທຳອິດ; ແລະ ຄົນ
ພວກນີ້ຄືຄົນທີ່ຕາຍໃນຄວາມໂງ່ຈ້າຂອງ
ພວກເຂົາກ່ອນພຣະຄຣິດສະເດັດມາ,
ໂດຍທີ່ພວກເຂົາບໍ່ໄດ້ຮັບປະກາດເລື່ອງ
[ກ]ຄວາມລອດເລີຍ. ແລະ ພຣະຜູ້ເປັນເຈົ້າ
ໄດ້ນຳເອົາການກັບຄືນຂອງຄົນເຫລົ່ານີ້;
ແລະ ພວກເຂົາຈຶ່ງມີສ່ວນໃນການຟື້ນຄືນ
ຊີວິດຄັ້ງທຳອິດ, ຫລື ມີຊີວິດນິລັນດອນ,
ໂດຍຖືກໄຖ່ໂດຍພຣະຜູ້ເປັນເຈົ້າ.
25 ແລະ [ກ]ເດັກນ້ອຍໆກໍມີຊີວິດນິລັນ
ດອນຄືກັນ.
26 ແຕ່ຈົ່ງເບິ່ງ, ແລະ ຈົ່ງ [ກ]ຢ້ານກົວ ແລະ
ຕົວສັ່ນຕໍ່ພຣະພັກຂອງພຣະເຈົ້າ; ເພາະ

18 ກ 3 ນຟ 20:40; ຄພ 128:19.
ຂ ຢຮ 16:33. ຄມພ ສະຫງົບ, ຄວາມສະຫງົບ.
19 ກ ມຊຢ 4:6.
ຂ 2 ນຟ 9:6–13.
21 ກ ແອວ 40:16–21.
23 ກ ພສສ 24:3–4; 1 ນຟ 15:33–36; ຄພ 76:50–70.
ຂ ຄມພ ຄວາມຕາຍທາງຮ່າງກາຍ.
24 ກ 2 ນຟ 9:25–26; ຄພ 137:7.
25 ກ ຄພ 29:46; 137:10. ຄມພ ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ.
26 ກ ພບຍ 5:29; ຢຄ 6:9.

ພວກທ່ານຄວນຈະສັ່ນສະທ້ານ; ເພາະວ່າ
ພຣະຜູ້ເປັນເຈົ້າຈະບໍ່ໄຖ່ຜູ້ໃດທີ່ [ຂ]ກະບົດຕໍ່
ພຣະອົງ ແລະ [ຄ]ຕາຍໄປໃນບາບຂອງພວກ
ເຂົາ; ແທ້ຈິງແລ້ວ, ເຖິງແມ່ນຄົນທັງຫລາຍ
ຜູ້ທີ່ຕາຍໄປໃນບາບຂອງພວກເຂົາ ນັບແຕ່
ການເລີ່ມຕົ້ນຂອງໂລກ, ທີ່ກະບົດຕໍ່ພຣະ
ເຈົ້າໂດຍເຈດຕະນາ, ໂດຍທີ່ຮູ້ຈັກພຣະ
ບັນຍັດຂອງພຣະເຈົ້າແລ້ວແຕ່ບໍ່ຮັກສາມັນ;
[ງ]ຄົນເຫລົ່ານີ້ຄືພວກທີ່ [ຈ]ບໍ່ມີສ່ວນໃນການ
ຟື້ນຄືນຊີວິດຄັ້ງທຳອິດ.
27 ສະນັ້ນ ພວກທ່ານບໍ່ຄວນຕົວສັ່ນບໍ?
ເພາະວ່າຄວາມລອດຈະບໍ່ມາເຖິງຄົນເຊັ່ນ
ນັ້ນ; ເພາະວ່າພຣະຜູ້ເປັນເຈົ້າຈະບໍ່ໄຖ່ຄົນ
ເຊັ່ນນັ້ນ; ແທ້ຈິງແລ້ວ, ພຣະຜູ້ເປັນເຈົ້າຈະ
ໄຖ່ຄົນເຊັ່ນນັ້ນບໍ່ໄດ້; ເພາະວ່າພຣະອົງປະ
ຕິເສດພຣະອົງເອງບໍ່ໄດ້; ເພາະພຣະອົງປະ
ຕິເສດ [ກ]ຄວາມຍຸດຕິທຳບໍ່ໄດ້ເມື່ອມີການ
ຮຽກຮ້ອງ.
28 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ເວລາຈະມາເຖິງທີ່ຄວາມລອດ
ຈາກພຣະຜູ້ເປັນເຈົ້າຈະຖືກ [ກ]ປ່າວປະກາດ
ແກ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ,
ແລະ ທຸກຜູ້ຄົນທັງປວງ.
29 ແທ້ຈິງແລ້ວ, ຂ້າແດ່ພຣະຜູ້ເປັນເຈົ້າ,
[ກ]ຄົນຍາມຂອງພຣະອົງຈະຮ້ອງດ້ວຍສຽງ
ດັງຂອງພວກເຂົາ; ພວກເຂົາຈະຮ້ອງເພງ
ເປັນສຽງດຽວກັນ; ເພາະວ່າພວກເຂົາຈະ
ເຫັນດ້ວຍຕາເມື່ອພຣະຜູ້ເປັນເຈົ້າຈະນຳ
ເອົາຊີໂອນຄືນມາ.
30 ຈົ່ງເປັ່ງສຽງປິຕິຍິນດີ, ຮ້ອງເພງນຳ
ກັນ, ກຸງເຢຣູຊາເລັມເອີຍ ເຈົ້າຜູ້ທີ່ເປັນ
ເມືອງຮົກຮ້າງ; ເພາະພຣະຜູ້ເປັນເຈົ້າໄດ້
ອອຍໃຈຜູ້ຄົນຂອງພຣະອົງແລ້ວ, ພຣະອົງ
ໄດ້ໄຖ່ກຸງເຢຣູຊາເລັມແລ້ວ.
31 ພຣະຜູ້ເປັນເຈົ້າໄດ້ກາງແຂນອັນສັກ
ສິດຂອງພຣະອົງໃນສາຍຕາຂອງປະຊາ
ຊາດທັງປວງ, ແລະ ທົ່ວທີ່ສຸດຂອງແຜ່ນດິນ
ໂລກຈະເຫັນການຊ່ວຍໃຫ້ລອດຂອງພຣະ
ເຈົ້າຂອງພວກເຮົາ.

## ບົດທີ 16

*ພຣະເຈົ້າໄຖ່ມະນຸດຈາກສະພາບອັນ
ຫລົງທາງ ແລະ ຕົກຕ່ຳຂອງພວກເຂົາ—
ຜູ້ທີ່ເຕັມໄປດ້ວຍການມະລົນຈະເປັນຢູ່ຄື
ກັບວ່າບໍ່ໄດ້ຮັບການໄຖ່—ພຣະຄຣິດເຮັດ
ໃຫ້ເກີດການຟື້ນຄືນຊີວິດທີ່ເປັນນິດ ຫລື
ຄວາມອັບປະໂຫຍດອັນບໍ່ມີວັນສິ້ນສຸດ.
ປະມານ 148 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນຄື
ເມື່ອອະບີນາໄດເວົ້າຂໍ້ຄວາມນີ້ແລ້ວ ເພິ່ນ
ໄດ້ເດ່ມືອອກໄປ ແລະ ກ່າວວ່າ: ເວລາຈະ
ມາເຖິງເມື່ອຄົນທັງຫລາຍຈະເຫັນ [ກ]ຄວາມ
ລອດຈາກພຣະຜູ້ເປັນເຈົ້າ; ເມື່ອທຸກປະຊາ
ຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກ
ຜູ້ຄົນທັງປວງຈະເຫັນພ້ອມກັນ, ແລະ ຈະ
[ຂ]ຮັບສາລະພາບຕໍ່ພຣະພັກຂອງພຣະເຈົ້າ
ວ່າ ການພິພາກສາຂອງພຣະອົງນັ້ນຍຸດຕິ
ທຳ.
2 ແລະ ເມື່ອນັ້ນຄົນຊົ່ວຈະຖືກ [ກ]ຂັບໄລ່
ອອກໄປ, ແລະ ພວກເຂົາຈະມີເຫດໃຫ້
ຮ້ອງຄວນ, ແລະ [ຂ]ຮ້ອງໄຫ້, ແລະ ຈົ່ມວ່າ,

26 *ຂ* 1 ນຟ 2:21–24.
*ຄ* ອຊກ 18:26; 1 ນຟ 15:32–33; ມຣນ 10:26.
*ງ* ແອວ 40:19.
*ຈ* ຄພ 76:81–86.
27 *ກ* ແອວ 34:15–16; 42:1.
28 *ກ* ຄມພ ວຽກງານເຜີຍແຜ່.
29 *ກ* ຄມພ ຍາມ, ຄົນຍາມ.
**16** 1 *ກ* ຄມພ ລອດ, ຄວາມລອດ.
*ຂ* ມຊຢ 27:31.
2 *ກ* ຄພ 63:53–54.
*ຂ* ມທ 13:41–42; ລກ 13:28; ແອວ 40:13.

ແລະ ກັດແຂ້ວຄ້ຽວຟັນ; ແລະ ນີ້ເປັນຍ້ອນ
ວ່າພວກເຂົາບໍ່ເຊື່ອຟັງສຸລະສຽງຂອງພຣະ
ຜູ້ເປັນເຈົ້າ; ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງບໍ່
ໄຖ່ພວກເຂົາ.

3 ເພາະວ່າ ພວກເຂົາເປັນຄົນມີ [ກ]ການ
ມະລົນ ແລະ ຕ່ຳຊ້າ, ແລະ [ຂ]ມານມີອຳນາດ
ເໜືອພວກເຂົາ; ແທ້ຈິງແລ້ວ, ງູເຖົ້າໂຕນັ້ນ
ໄດ້ [ຄ]ຫລອກລວງບິດາມານດາຜູ້ທຳອິດ
ຂອງພວກເຮົາ, ຊຶ່ງເປັນມາຂອງສາເຫດ
ຂອງ [ງ]ການຕົກຂອງພວກເພິ່ນ; ຈຶ່ງເປັນສາ
ເຫດໃຫ້ມະນຸດຊາດທັງປວງກັບມາມີການ
ມະລົນ, ຕັນຫາໜ້າມືດ, ຕ່ຳຊ້າ, [ຈ]ຮູ້ຈັກ
ຄວາມຊົ່ວຈາກຄວາມດີ, ຍອມຕົນຂຶ້ນກັບ
ມານ.

4 ມະນຸດຊາດທັງປວງຈຶ່ງ [ກ]ຫລົງທາງ
ໄປແນວນັ້ນ; ແລະ ຈົ່ງເບິ່ງ, ພວກເຂົາຈະ
ຫລົງທາງຢູ່ຢ່າງບໍ່ມີວັນສຸດ ຖ້າຫາກພຣະ
ເຈົ້າບໍ່ໄດ້ໄຖ່ຜູ້ຄົນຂອງພຣະອົງໃຫ້ພົ້ນຈາກ
ສະພາບອັນຫລົງທາງ ແລະ ຕົກຕ່ຳຂອງ
ພວກເຂົາ.

5 ແຕ່ຈົ່ງຈຳໄວ້ວ່າ ຜູ້ໃດທີ່ຍັງຄົງຢູ່ໃນ
ສະພາບແຫ່ງ [ກ]ການມະລົນຂອງຕົນເອງ,
ແລະ ດຳເນີນຕໍ່ໄປໃນທາງຂອງບາບແລະ
ການກະບົດຕໍ່ພຣະເຈົ້າ ຜູ້ນັ້ນຈະຍັງຄົງຢູ່
ໃນສະພາບຕົກຕ່ຳຂອງຕົນ ແລະ ມານມີ
ອຳນາດທັງໝົດເໜືອເຂົາ. ສະນັ້ນ ເຂົາຈຶ່ງ
ເປັນຄືກັນກັບບໍ່ມີ [ຂ]ການໄຖ່ເລີຍ, ເປັນສັດ
ຕູຂອງພຣະເຈົ້າ; ແລະ ມານກໍເປັນສັດຕູ
ຂອງພຣະເຈົ້າຄືກັນ.

6 ແລະ ບັດນີ້ຖ້າຫາກພຣະຄຣິດບໍ່ສະ
ເດັດມາຍັງແຜ່ນດິນໂລກ, ກ່າວເຖິງສິ່ງທີ່
ຈະມາເຖິງ [ກ]ເໝືອນດັ່ງມັນມາເຖິງແລ້ວ,
ການໄຖ່ກໍຈະມີຂຶ້ນບໍ່ໄດ້.

7 ແລະ ຖ້າຫາກພຣະຄຣິດບໍ່ລຸກຂຶ້ນຈາກ
ຄວາມຕາຍ, ຫລື ວ່າເຮັດໃຫ້ສາຍຮັດແຫ່ງ
ຄວາມຕາຍຂາດອອກ ເພື່ອໃຫ້ຫລຸມຝັງສົບ
ບໍ່ມີໄຊຊະນະ, ແລະ ເພື່ອຄວາມຕາຍຈະບໍ່
ມີ [ກ]ຄວາມເຈັບປວດ, ແລ້ວຈະບໍ່ມີການຟື້ນ
ຄືນຊີວິດເລີຍ.

8 ແຕ່ມັນມີ [ກ]ການຟື້ນຄືນຊີວິດ, ສະນັ້ນ
ຫລຸມຝັງສົບຈຶ່ງບໍ່ມີໄຊຊະນະ, ແລະ ຄວາມ
ເຈັບປວດແຫ່ງ [ຂ]ຄວາມຕາຍຈະຖືກກືນເຂົ້າ
ໄປໃນພຣະຄຣິດ.

9 ພຣະອົງເປັນ [ກ]ແສງສະຫວ່າງ ແລະ
ຊີວິດຂອງໂລກ; ແທ້ຈິງແລ້ວ, ເປັນແສງ
ສະຫວ່າງອັນບໍ່ມີບ່ອນສິ້ນສຸດ, ຊຶ່ງຈະບໍ່ມີ
ຄວາມມືດເລີຍ; ແທ້ຈິງແລ້ວ, ມັນເປັນຊີວິດ
ອັນບໍ່ມີບ່ອນສິ້ນສຸດ ຊຶ່ງຈະບໍ່ມີຄວາມຕາຍ
ເລີຍ.

10 ເຖິງແມ່ນວ່າຮ່າງກາຍທີ່ເປັນມະຕະ
ນີ້ຈະຖືກສວມໃສ່ [ກ]ຄວາມເປັນອະມະຕະ,
ແລະ ຄວາມເນົ່າເປື່ອຍຈະສວມໃສ່ຄວາມ
ບໍ່ເນົ່າເປື່ອຍ, ແລະ ຈະຖືກນຳໄປ [ຂ]ຢືນຢູ່
ຕໍ່ໜ້າບ່ອນພິພາກສາຂອງພຣະເຈົ້າ, ເພື່ອ

3 ກ ຄລຕ 5:16–25; ມຊຢ 3:19. ຄມພ ມະນຸດທີ່ມີຈິດໃຈທຳມະດາ.
ຂ 2 ນຟ 9:8–9. ຄມພ ມານ.
ຄ ປຖກ 3:1–13; ມຊ 4:5–19.
ງ ຄມພ ການຕົກຂອງອາດາມ ແລະ ເອວາ.
ຈ 2 ນຟ 2:17–18, 22–26.
4 ກ ແອວ 42:6–14.
5 ກ ແອວ 41:11. ຄມພ ການມະລົນ.
ຂ ຄມພ ໄຖ່, ການໄຖ່, ຖືກໄຖ່.
6 ກ ມຊຢ 3:13.
7 ກ ຣສອ 13:14; ມຊຢ 15:8, 20.
8 ກ ແອວ 42:15. ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຂ ອຊຢ 25:8; 1 ກຣທ 15:54–55; ມມ 7:5.
9 ກ ຄພ 88:5–13. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
10 ກ ແອວ 40:2. ຄມພ ອະມະຕະ, ຄວາມເປັນອະມະຕະ.
ຂ ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.

ຮັບ [ຄ]ການ ພິພາກສາ ຈາກ ພຣະ ອົງ ຕາມ
ວຽກງານຂອງພວກເຂົາ ບໍ່ວ່າພວກເຂົາຈະ
ດີ ຫລື ຈະຊົ່ວ—
11 ຖ້າຫາກມັນດີ, ກໍໄປເຖິງການຟື້ນຄືນ
ຊີວິດ ແລະ ມີຄວາມຜາສຸກອັນ [ກ]ບໍ່ມີວັນສິ້ນ
ສຸດ; ແລະ ຖ້າຫາກມັນຊົ່ວ, ກໍໄປເຖິງການ
ຟື້ນຄືນຊີວິດສູ່ຄວາມອັບປະໂຫຍດອັນ [ຂ]ບໍ່
ມີວັນສິ້ນສຸດ, ໂດຍຖືກສົ່ງໄປໃຫ້ມານຜູ້ທີ່
ພວກເຂົາຂຶ້ນກັບມັນ, ຊຶ່ງແມ່ນຄວາມອັບ
ປະໂຫຍດ—
12 ໂດຍ ໄປ ຕາມ ຄວາມ ປະສົງ ອັນ ເຕັມ
ໄປດ້ວຍການມະລົນ ແລະ ຄວາມປາດຖະ
ໜາຂອງພວກເຂົາເອງ ໂດຍບໍ່ເຄີຍເອີ້ນຫາ
ພຣະຜູ້ເປັນເຈົ້າ ທັງໆທີ່ພຣະພາຫາແຫ່ງ
[ກ]ຄວາມເມດຕາຂອງພຣະອົງເດ່ອອກມາ
ຫາພວກເຂົາ; ຊຶ່ງເປັນພຣະພາຫາແຫ່ງ
ຄວາມເມດຕາຂອງພຣະອົງເດ່ອອກມາຫາ
ພວກເຂົາແລ້ວ, ແລະ ພວກເຂົາບໍ່ຮັບເອົາ;
ພວກເຂົາຖືກເຕືອນເຖິງຄວາມຊົ່ວຮ້າຍ
ຂອງພວກເຂົາ ແຕ່ພວກເຂົາບໍ່ປະຖິ້ມມັນ
ເລີຍ; ແລະ ພວກເຂົາໄດ້ຮັບພຣະບັນຊາ
ໃຫ້ກັບໃຈ ແຕ່ພວກເຂົາບໍ່ໄດ້ກັບໃຈເລີຍ.
13 ແລະ ບັດນີ້, ພວກທ່ານຈະບໍ່ສັ່ນສະ
ທ້ານ ແລະ ກັບໃຈຈາກບາບຂອງພວກ
ທ່ານບໍ, ແລະ ຈົ່ງຈຳໄວ້ວ່າ ພຽງແຕ່ໃນ
ແລະ ໂດຍທາງພຣະຄຣິດເທົ່ານັ້ນທີ່ພວກ
ທ່ານຈະລອດໄດ້?
14 ສະນັ້ນ, ຖ້າຫາກພວກທ່ານສິດສອນ
[ກ]ກົດຂອງໂມເຊແລ້ວ, ກໍຕ້ອງສິດສອນອີກ
ວ່າ ມັນຈະເປັນເງົາຂອງສິ່ງທີ່ຈະມາເຖິງ—
15 ຈົ່ງສິດສອນພວກເຂົາວ່າ ການໄຖ່ມາ
ເຖິງໂດຍທາງພຣະຄຣິດພຣະຜູ້ເປັນເຈົ້າ,
ຜູ້ຊຶ່ງເປັນ [ກ]ພຣະບິດາຜູ້ສະຖິດນິລັນດອນ
ອົງນີ້. ອາແມນ.

## ບົດທີ 17

*ແອວມາເຊື່ອ ແລະ ຂຽນຄຳເວົ້າຂອງອະບີນາໄດໄວ້—ອະບີນາໄດຕາຍຢ່າງທໍລະມານຢູ່ໃນກອງໄຟ—ເພິ່ນທຳນາຍເຖິງພະຍາດ ແລະ ຄວາມຕາຍໃນຂະນະທີ່ເພິ່ນຖືກເຜົາຢູ່ໃນກອງໄຟ. ປະມານ 148 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອອະບີນາໄດກ່າວຂໍ້ຄວາມເຫລົ່ານີ້ຈົບ
ແລ້ວ, ກະສັດໄດ້ສັ່ງໃຫ້ [ກ]ພວກປະໂລຫິດ
ເອົາເພິ່ນໄປ ແລະ ໃຫ້ຂ້າເພິ່ນຖິ້ມເສຍ.
2 ແຕ່ມີຄົນໜຶ່ງໃນບັນດາພວກປະໂລຫິດ
ນັ້ນຊື່ວ່າ [ກ]ແອວມາ, ລາວເປັນຜູ້ສືບຕະກຸນ
ຂອງນີໄຟຄືກັນ. ແລະ ລາວເປັນຄົນໜຸ່ມ
ແໜ້ນ, ແລະ ລາວ [ຂ]ເຊື່ອໃນຄຳເວົ້າຂອງ
ອະບີນາໄດ, ເພາະລາວຮູ້ກ່ຽວກັບຄວາມ
ຊົ່ວຮ້າຍ ຊຶ່ງອະບີນາໄດໃຫ້ຖ້ອຍຄຳກ່ຽວ
ກັບຄົນເຫລົ່ານັ້ນ; ສະນັ້ນ ລາວຈຶ່ງວິງວອນ
ກະສັດເພື່ອບໍ່ໃຫ້ກະສັດຄຽດແຄ້ນໃຫ້ອະບີ
ນາໄດ, ແຕ່ໃຫ້ປ່ອຍເພິ່ນໄປຢ່າງສັນຕິ.
3 ແຕ່ກະສັດໄດ້ຄຽດແຄ້ນຫລາຍຂຶ້ນ
ແລະ ສັ່ງໃຫ້ຂັບໄລ່ແອວມາອອກໄປຈາກ
ບັນດາພວກເຂົາ, ແລະ ໄດ້ສົ່ງຂ້າໃຊ້ໃຫ້
ຕິດຕາມໄປເພື່ອຈະໄດ້ຂ້າລາວເສຍ.
4 ແຕ່ລາວໄດ້ໜີໄປກ່ອນ ແລະ ລີ້ຊ່ອນ
ຕົວຢູ່ຈົນພວກເຂົາຫາບໍ່ເຫັນ. ແລະ ໂດຍ

10 *ຄ* ແອວ 41:3–6.
11 *ກ* ຄມພ ຊີວິດນິລັນດອນ.
*ຂ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
12 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
14 *ກ* ຄມພ ກົດຂອງໂມເຊ.
15 *ກ* ມຊຢ 3:8; 5:7; ອທ 3:14.
**17** 1 *ກ* ມຊຢ 11:1, 5–6.
2 *ກ* ມຊຢ 23:6, 9–10. ຄມພ ແອວມາຜູ້ເປັນບິດາ.
*ຂ* ມຊຢ 26:15.

ທີ່ລີ້ຊ່ອນຕົວຢູ່ຫລາຍມື້ ລາວໄດ້ [ກ]ຂຽນຂໍ້ຄວາມຊຶ່ງອະບີນາໄດເວົ້າໄວ້ທັງໝົດ.

5 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື ກະສັດໃຫ້ທະຫານຍາມຂອງຕົນລ້ອມອະບີນາໄດໄວ້ ແລະ ຈັບເພິ່ນ; ແລະ ພວກເຂົາມັດເພິ່ນ ແລະ ເອົາເພິ່ນເຂົ້າຄຸກ.

6 ແລະ ສາມມື້ຕໍ່ມາ, ກະສັດໄດ້ປຶກສາກັບພວກປະໂລຫິດຂອງຕົນ, ແລ້ວເພິ່ນຈຶ່ງສັ່ງໃຫ້ເອົາເພິ່ນມາຢູ່ຕໍ່ໜ້າເພິ່ນອີກ.

7 ແລະ ເພິ່ນກ່າວກັບເພິ່ນວ່າ: ອະບີນາໄດ, ພວກເຮົາພົບຂໍ້ກ່າວຫາເຈົ້າແລ້ວ, ແລະ ເຈົ້າສົມຄວນທີ່ຈະຕາຍ.

8 ເພາະເຈົ້າເວົ້າວ່າ [ກ]ພຣະເຈົ້າພຣະອົງເອງຈະສະເດັດລົງມາໃນບັນດາລູກຫລານມະນຸດ; ແລະ ບັດນີ້, ເພາະເຫດນີ້ເຈົ້າຈະຕ້ອງຕາຍ ເວັ້ນເສຍແຕ່ເຈົ້າຈະຖອນຄຳເວົ້າທັງໝົດຊຶ່ງເຈົ້າເວົ້າບໍ່ດີກ່ຽວກັບພວກເຮົາ ແລະ ຜູ້ຄົນຂອງເຮົາ.

9 ບັດນີ້ອະບີນາໄດກ່າວກັບເພິ່ນວ່າ: ຂ້ານ້ອຍກ່າວກັບທ່ານວ່າ, ຂ້ານ້ອຍຈະບໍ່ຖອນຄຳເວົ້າຊຶ່ງຂ້ານ້ອຍໄດ້ເວົ້າກັບທ່ານກ່ຽວກັບຜູ້ຄົນພວກນີ້, ເພາະມັນເປັນຄວາມຈິງ; ແລະ ເພື່ອທ່ານຈະໄດ້ຮູ້ເຖິງຄວາມແນ່ນອນຂອງມັນ ຂ້ານ້ອຍຈຶ່ງຍອມຕົວໃຫ້ຢູ່ໃນມືຂອງທ່ານ.

10 ແທ້ຈິງແລ້ວ, ແລະ ຂ້ານ້ອຍຈະຍອມເຖິງແມ່ນຈົນເຖິງສິ້ນລົມຫາຍໃຈ, ແລະ ຂ້ານ້ອຍຈະບໍ່ຖອນຄຳເວົ້າຂອງຂ້ານ້ອຍ, ແລະ ມັນຈະຢືນເປັນປະຈັກພະຍານກ່າວໂທດທ່ານ. ແລະ ຖ້າຫາກທ່ານສັ່ງປະຫານຂ້ານ້ອຍ ທ່ານກໍເຮັດໃຫ້ [ກ]ຜູ້ບໍລິສຸດຕ້ອງເສຍຊີວິດ, ແລະ ການກະທຳເຊັ່ນນີ້ຈະຢືນເປັນປະຈັກພະຍານກ່າວໂທດທ່ານໃນວັນສຸດທ້າຍນຳອີກ.

11 ແລະ ບັດນີ້ກະສັດໂນອາເກືອບຈະປ່ອຍຕົວເພິ່ນໄປ ເພາະເພິ່ນຢ້ານກົວຄຳເວົ້າຂອງເພິ່ນ; ເພາະເພິ່ນຢ້ານວ່າ ການພິພາກສາຂອງພຣະເຈົ້າຈະເກີດກັບເພິ່ນ.

12 ແຕ່ພວກປະໂລຫິດເປັ່ງສຽງກ່າວໂທດເພິ່ນ, ແລະ ເລີ່ມກ່າວຫາເພິ່ນ, ມີຄຳວ່າ: ມັນໝິ່ນປະໝາດກະສັດ. ສະນັ້ນກະສັດຈຶ່ງຖືກຍຸຍົງໃຫ້ມີຄວາມຄຽດແຄ້ນໃຫ້ເພິ່ນ, ແລະ ເພິ່ນຈຶ່ງປ່ອຍເພິ່ນໃຫ້ຖືກປະຫານຊີວິດ.

13 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື ພວກເຂົາໄດ້ຈັບເພິ່ນໄປ, ແລ້ວມັດເພິ່ນ ແລະ ໂບຍຕີຮ່າງກາຍຂອງເພິ່ນດ້ວຍຫວາຍ, ແທ້ຈິງແລ້ວ, ຈົນໃຫ້ເຖິງແກ່ຄວາມຕາຍ.

14 ແລະ ບັດນີ້ເມື່ອແປວໄຟເລີ່ມຈະໄໝ້ເພິ່ນ, ເພິ່ນໄດ້ຮ້ອງໃສ່ພວກເຂົາ, ມີຄວາມວ່າ:

15 ຈົ່ງເບິ່ງ, ສິ່ງທີ່ພວກທ່ານກະທຳກັບຂ້າພະເຈົ້າສັນໃດ, ມັນກໍຈະເກີດກັບພວກທ່ານສັນນັ້ນ ຄືລູກຫລານຂອງພວກທ່ານຈະເຮັດໃຫ້ຄົນຈຳນວນຫລວງຫລາຍໄດ້ຮັບຄວາມທຸກທໍລະມານເຖິງແມ່ນດ້ວຍຄວາມເຈັບປວດຂອງ [ກ]ຄວາມຕາຍດ້ວຍໄຟ; ແລະ ນີ້ເປັນເພາະພວກເຂົາເຊື່ອໃນການຊ່ອຍໃຫ້ລອດຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.

16 ແລະ ເຫດການຈະບັງເກີດຂຶ້ນຄືພວກທ່ານຈະເປັນທຸກດ້ວຍພະຍາດນາໆປະການ ເພາະຄວາມຊົ່ວຮ້າຍຂອງພວກທ່ານ.

17 ແທ້ຈິງແລ້ວ, ແລະ ພວກທ່ານຈະຖືກ [ກ]ລົງໂທດຮອບດ້ານ ແລະ ຖືກຂັບໄລ່ຕ້ອນໄປ ແລະ ກະຈັດກະຈາຍໄປທາງນັ້ນທາງ

4 *ກ* ຄມພ ພຣະຄຳພີ.
8 *ກ* ມຊຢ 13:25, 33–34.
10 *ກ* ແອວ 60:13.
15 *ກ* ມຊຢ 13:9–10; ແອວ 25:4–12.
17 *ກ* ມຊຢ 21:1–5, 13.

ນີ້, ຈະເປັນເໝືອນດັ່ງຝູງແກະປ່າທີ່ຖືກສັດປ່າຂັບໄລ່ປອງຮ້າຍ.

18 ແລະ ໃນມື້ນັ້ນພວກທ່ານຈະຖືກລ່າ, ແລະ ພວກທ່ານຈະຖືກຈັບໄປໂດຍມືສັດຕູຂອງພວກທ່ານ, ແລະ ເມື່ອນັ້ນພວກທ່ານຈະຮັບທຸກທໍລະມານດ້ວຍຄວາມເຈັບປວດຂອງ [ກ]ຄວາມຕາຍດ້ວຍໄຟດັ່ງທີ່ຂ້າພະເຈົ້າຮັບທຸກທໍລະມານຢູ່ໃນຂະນະນີ້.

19 ພຣະເຈົ້າຈະ [ກ]ແກ້ແຄ້ນຄົນທີ່ທຳລາຍຜູ້ຄົນຂອງພຣະອົງດັ່ງນັ້ນ. ໂອ້ ພຣະອົງເຈົ້າ, ຂໍຈົ່ງຮັບເອົາຈິດວິນຍານຂອງຂ້ານ້ອຍດ້ວຍເທີ້ນ.

20 ແລະ ບັດນີ້ເມື່ອອະບິນາໄດກ່າວຂໍ້ຄວາມນີ້ແລ້ວ, ເພິ່ນກໍລົ້ມລົງຮັບຄວາມຕາຍດ້ວຍໄຟ; ແທ້ຈິງແລ້ວ, ເພິ່ນຖືກປະຫານເພາະເພິ່ນບໍ່ຍອມປະຕິເສດພຣະບັນຍັດຂອງພຣະເຈົ້າ, ໂດຍໄດ້ຜະນຶກຄວາມຈິງຂອງຄຳເວົ້າຂອງເພິ່ນດ້ວຍຄວາມຕາຍ.

## ບົດທີ 18

*ແອວມາສັ່ງສອນຢ່າງງຽບໆ—ເພິ່ນໄດ້ຕັ້ງພັນທະສັນຍາຂອງການບັບຕິສະມາ ແລະ ບັບຕິສະມາໃນນ້ຳມໍມອນ—ເພິ່ນໄດ້ສ້າງຕັ້ງສາດສະໜາຈັກຂອງພຣະຄຣິດ ແລະ ແຕ່ງຕັ້ງປະໂລຫິດ—ພວກເຂົາທຳງານລ້ຽງຕົວເອງ ແລະ ສິດສອນຜູ້ຄົນ—ແອວມາກັບຜູ້ຄົນຂອງເພິ່ນຫລົບໜີຈາກກະສັດໂນອາ ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ. ປະມານ 147–145 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ແອວມາ, ໄດ້ຫລົບໜີຈາກພວກຄົນໃຊ້ຂອງກະສັດໂນອາ, ໄດ້ [ກ]ກັບໃຈຈາກບາບ ແລະ ຄວາມຊົ່ວຮ້າຍຂອງເພິ່ນ, ແລະ ທ່ອງທ່ຽວໄປໃນບັນດາຜູ້ຄົນຢ່າງງຽບໆ, ແລະ ເລີ່ມສິດສອນຄຳຂອງອະບິນາໄດ—

2 ແທ້ຈິງແລ້ວ, ກ່ຽວກັບສິ່ງທີ່ຈະມາເຖິງ, ແລະ ກ່ຽວກັບການຟື້ນຄືນຊີວິດຂອງຄົນຕາຍນຳອີກ, ແລະ [ກ]ການໄຖ່ຜູ້ຄົນ, ຊຶ່ງຈະຖືກເຮັດໃຫ້ເກີດຂຶ້ນໂດຍ [ຂ]ອຳນາດ, ແລະ ຄວາມທຸກທໍລະມານ, ແລະ ໂດຍການສິ້ນພຣະຊົນຂອງພຣະຄຣິດ, ແລະ ການຟື້ນຄືນພຣະຊົນ ແລະ ການສະເດັດຂຶ້ນສະຫວັນຂອງພຣະອົງ.

3 ແລະ ເພິ່ນໄດ້ສິດສອນຄົນເປັນຈຳນວນຫລວງຫລາຍທີ່ຍອມຟັງຄຳເວົ້າຂອງເພິ່ນ. ແລະ ເພິ່ນໄດ້ສິດສອນພວກເຂົາຢ່າງງຽບໆເພື່ອກະສັດຈະບໍ່ຮູ້ເຖິງເລື່ອງນີ້. ແລະ ຫລາຍຄົນໄດ້ເຊື່ອຄຳເວົ້າຂອງເພິ່ນ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລາຍຕໍ່ຫລາຍຄົນທີ່ເຊື່ອເພິ່ນໄດ້ອອກໄປຫາ [ກ]ບ່ອນໜຶ່ງຊຶ່ງເອີ້ນວ່າ ມໍມອນ, ຊຶ່ງກະສັດໄດ້ຕັ້ງຊື່ໃຫ້, ໂດຍທີ່ຢູ່ຊາຍແດນຂອງແຜ່ນດິນ ມັນຈຶ່ງມີສັດປ່າຢູ່ຢ່າງຫລວງຫລາຍບາງເວລາ ຫລື ຕາມລະດູການ.

5 ບັດນີ້, ທີ່ມໍມອນນັ້ນມີອ່າງນ້ຳບໍລິສຸດຢູ່ແຫ່ງໜຶ່ງ, ແລະ ແອວມາໄດ້ໄປຫາບ່ອນນັ້ນ, ມັນມີພຸ່ມໄມ້ນ້ອຍທີ່ໜາແໜ້ນຢູ່ໃກ້ນ້ຳ, ຊຶ່ງເພິ່ນໄດ້ລີ້ຊ່ອນຕົວຢູ່ໃນເວລາກາງເວັນໃຫ້ພົ້ນຈາກການຄົ້ນຫາຂອງກະສັດ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນເປັນຈຳນວນຫລວງຫລາຍທີ່ເຊື່ອເພິ່ນໄດ້ໄປບ່ອນນັ້ນ ເພື່ອຟັງຄຳເວົ້າຂອງເພິ່ນ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກຫລາຍມື້ ມັນມີຄົນເປັນຈຳນວນບໍ່ໜ້ອຍໄປເຕົ້າໂຮມກັນຢູ່ທີ່ມໍມອນເພື່ອຟັງ

18 *ກ* ມຊຍ 19:18–20.
19 *ກ* ຄມພ ແກ້ແຄ້ນ, ການແກ້ແຄ້ນ.
**18** 1 *ກ* ມຊຍ 23:9–10.
2 *ກ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຂ* ຄມພ ຊົດໃຊ້, ການຊົດໃຊ້.
4 *ກ* ແອວ 5:3.

ຄຳເວົ້າຂອງແອວມາ. ແທ້ຈິງແລ້ວ, ຄົນທັງ
ໝົດ ທີ່ເຊື່ອໃນຄຳເວົ້າຂອງເພິ່ນກໍໄດ້ມາ
ເຕົ້າໂຮມກັນເພື່ອຟັງເພິ່ນ. ແລະ ເພິ່ນໄດ້
[ກ]ສິດສອນພວກເຂົາ, ແລະ ໄດ້ສັ່ງສອນເຖິງ
ການກັບໃຈ, ແລະ ການໄຖ່, ແລະ ການມີ
ສັດທາໃນພຣະຜູ້ເປັນເຈົ້າ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງ, ນີ້ຄືນ້ຳ
ມໍມອນ (ເພາະເອີ້ນຊື່ມັນແບບນັ້ນ) ແລະ
ບັດນີ້, ຍ້ອນວ່າພວກທ່ານ [ກ]ປາດຖະໜາ
ຈະເຂົ້າມາຫາ [ຂ]ຝູງຊົນຂອງພຣະເຈົ້າ,
ແລະ ມີຊື່ວ່າຜູ້ຄົນຂອງພຣະອົງ, ແລະ
[ຄ]ເຕັມໃຈຈະແບກຫາບພາລະຂອງກັນແລະ
ກັນ, ເພື່ອຈະໄດ້ແບ່ງເບົາ;

9 ແທ້ຈິງແລ້ວ, ແລະ ເຕັມໃຈທີ່ຈະເປັນ
ທຸກກັບຄົນທີ່ເປັນທຸກ; ແທ້ຈິງແລ້ວ, ຈະ
ປອບໃຈຄົນທີ່ຕ້ອງການຄວາມປອບໃຈ,
ແລະ ຈະຢືນເປັນ [ກ]ພະຍານຂອງພຣະ
ເຈົ້າໃນທຸກເວລາ ແລະ ໃນທຸກສິ່ງ, ແລະ
ໃນທຸກບ່ອນທີ່ພວກທ່ານຢູ່, ເຖິງແມ່ນຈົນ
ເຖິງຄວາມຕາຍ, ເພື່ອພວກທ່ານຈະຖືກ
ໄຖ່ໂດຍພຣະເຈົ້າ, ແລະ ຖືກນັບເຂົ້າຢູ່ກັບ
ບັນດາຜູ້ຄົນຂອງ [ຂ]ການຟື້ນຄືນຊີວິດຄັ້ງ
ທຳອິດ, ເພື່ອພວກທ່ານຈະມີ [ຄ]ຊີວິດນິລັນ
ດອນ—

10 ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານ
ວ່າ, ຖ້າຫາກສິ່ງນີ້ເປັນຄວາມປາດຖະໜາ
ຂອງໃຈຂອງພວກທ່ານແລ້ວ, ພວກທ່ານມີ
ຫຍັງແດ່ຂັດຂ້ອງທີ່ຈະຮັບ [ກ]ບັບຕິສະມາໃນ
ພຣະນາມຂອງພຣະຜູ້ເປັນເຈົ້າ, ເພື່ອຈະ
ເປັນພະຍານຕໍ່ພຣະອົງ, ວ່າພວກທ່ານໄດ້
ເຂົ້າເຮັດ [ຂ]ພັນທະສັນຍາກັບພຣະອົງ, ວ່າ
ພວກທ່ານຈະຮັບໃຊ້ພຣະອົງ ແລະ ຮັກສາ
ພຣະບັນຍັດຂອງພຣະອົງ, ເພື່ອພຣະອົງ
ຈະໄດ້ຫຸ້ມເທພຣະວິນຍານຂອງພຣະອົງ
ລົງມາເທິງພວກທ່ານຢ່າງຫລວງຫລາຍຍິ່ງ
ຂຶ້ນ?

11 ແລະ ບັດນີ້ເມື່ອຜູ້ຄົນໄດ້ຍິນຂໍ້ຄວາມ
ນີ້ ແລ້ວ, ພວກເຂົາຕົບມືດ້ວຍຄວາມສຸກ
ແລະ ຮ້ອງອອກມາວ່າ: ນີ້ຄືຄວາມປາດຖະ
ໜາຂອງໃຈຂອງພວກເຮົາ.

12 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ແອວມາໄດ້ພາເຮລາມ, ຊຶ່ງເປັນຄົນໜຶ່ງ
ໃນກຸ່ມທຳອິດ, ແລະ ອອກໄປຢືນຢູ່ໃນນ້ຳ,
ແລະ ຮ້ອງວ່າ: ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງ
ໂປດຫຸ້ມເທພຣະວິນຍານຂອງພຣະອົງລົງ
ມາເທິງຜູ້ຮັບໃຊ້ຂອງພຣະອົງດ້ວຍເທີ້ນ,
ເພື່ອລາວຈະໄດ້ກະທຳການນີ້ດ້ວຍໃຈອັນ
ບໍລິສຸດ.

13 ແລະ ເມື່ອເພິ່ນກ່າວຂໍ້ຄວາມນີ້ແລ້ວ,
[ກ]ພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ມາ
ສະຖິດຢູ່ກັບເພິ່ນ, ແລະ ເພິ່ນໄດ້ກ່າວວ່າ:
ເຮລາມ, ຂ້າພະເຈົ້າໃຫ້ [ຂ]ບັບຕິສະມາທ່ານ
ໂດຍ [ຄ]ສິດອຳນາດຂອງພຣະເຈົ້າອົງຊົງລິດ
ອຳນາດຍິ່ງໃຫຍ່, ຊຶ່ງເປັນປະຈັກພະຍານ
ວ່າ ທ່ານໄດ້ເຂົ້າເຮັດພັນທະສັນຍາທີ່ຈະ
ຮັບໃຊ້ພຣະອົງຈົນກວ່າທ່ານຈະຕາຍທາງ
ຮ່າງກາຍທີ່ເປັນມະຕະ; ແລະ ຂໍໃຫ້ພຣະ
ວິນຍານຂອງພຣະຜູ້ເປັນເຈົ້າຫລັ່ງລົງມາ
ເທິງທ່ານ; ແລະ ຂໍໃຫ້ພຣະອົງປະທານຊີ

7 *ກ* ແອວ 5:11–13.
8 *ກ* ຄພ 20:37.
*ຂ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
*ຄ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.
9 *ກ* ຄມພ ເປັນພະຍານ; ພະຍານ; ວຽກງານເຜີຍແຜ່.
*ຂ* ມຊຢ 15:21–26.
*ຄ* ຄມພ ຊີວິດນິລັນດອນ.
10 *ກ* 2 ນຟ 31:17. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* ຄມພ ພັນທະສັນຍາ.
13 *ກ* ຄມພ ພຣະວິນຍານບໍລິສຸດ.
*ຂ* 3 ນຟ 11:23–26; ຄພ 20:72–74.
*ຄ* ຫຼຊ 1:5. ຄມພ ຖານະປະໂລຫິດ.

ວິດນິລັນດອນໃຫ້ແກ່ທ່ານ ໂດຍ [ງ]ການໄຖ່ຂອງພຣະຄຣິດ, ຜູ້ທີ່ພຣະອົງຕຽມໄວ້ຕັ້ງແຕ່ [ຈ]ການວາງຮາກຖານຂອງໂລກດ້ວຍເທີ້ນ.

14 ແລະ ຫລັງຈາກແອວມາກ່າວຂໍ້ຄວາມນີ້ແລ້ວ, ທັງແອວມາ ແລະ ເຮລາມ ກໍ [ກ]ຝັງຕົວຢູ່ໃນນ້ຳ; ແລະ ທັງສອງລຸກຂຶ້ນ ແລະ ອອກມາຈາກນ້ຳດ້ວຍຄວາມຊື່ນຊົມ, ເຕັມໄປດ້ວຍພຣະວິນຍານ.

15 ແລະ ແອວມາໄດ້ພາຄົນໜຶ່ງອອກໄປໃນນ້ຳອີກເປັນຄັ້ງທີສອງ, ແລະ ໃຫ້ບັບຕິສະມາເຂົາຕາມແບບຢ່າງເໝືອນຄັ້ງທຳອິດ, ພຽງແຕ່ເພິ່ນບໍ່ໄດ້ຝັງຕົວຂອງເພິ່ນໃນນ້ຳອີກ.

16 ແລະ ຕາມວິທີນີ້ ເພິ່ນໄດ້ໃຫ້ບັບຕິສະມາແກ່ທຸກຄົນທີ່ອອກໄປຍັງບ່ອນມໍມອນ; ແລະ ພວກເຂົາມີຈຳນວນຢູ່ສອງຮ້ອຍສີ່ຄົນ; ແທ້ຈິງແລ້ວ, ແລະ ພວກເຂົາໄດ້ຮັບ [ກ]ບັບຕິສະມາໃນນ້ຳມໍມອນ, ແລະ ເຕັມໄປດ້ວຍ [ຂ]ພຣະຄຸນຂອງພຣະເຈົ້າ.

17 ແລະ ພວກເຂົາຖືກເອີ້ນວ່າສາດສະໜາຈັກຂອງພຣະເຈົ້າ, ຫລື [ກ]ສາດສະໜາຈັກຂອງພຣະຄຣິດ, ຕັ້ງແຕ່ເວລານັ້ນມາ. ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ໄດ້ຮັບບັບຕິສະມາໂດຍອຳນາດ ແລະ ສິດອຳນາດຂອງພຣະເຈົ້າກໍໄດ້ຖືກຮວມເຂົ້າໃນສາດສະໜາຈັກຂອງພຣະອົງ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ແອວມາ, ໂດຍໄດ້ຮັບ [ກ]ສິດອຳນາດຈາກພຣະເຈົ້າໃຫ້ແຕ່ງຕັ້ງປະໂລຫິດ; ເຖິງແມ່ນໄດ້ແຕ່ງຕັ້ງປະໂລຫິດຄົນໜຶ່ງຕໍ່ທຸກຈຳນວນຫ້າສິບຄົນຂອງພວກເຂົາ, ເພື່ອສັ່ງສອນພວກເຂົາ ແລະ ເພື່ອ [ຂ]ສິດສອນຄົນເຫລົ່ານັ້ນເຖິງສິ່ງທີ່ກ່ຽວກັບອານາຈັກຂອງພຣະເຈົ້າ.

19 ແລະ ເພິ່ນໄດ້ສັ່ງພວກເຂົາວ່າ ບໍ່ໃຫ້ສິດສອນສິ່ງອື່ນນອກຈາກເປັນສິ່ງທີ່ເພິ່ນສິດສອນໄວ້, ແລະ ໄດ້ເວົ້າຈາກປາກຂອງສາດສະດາຜູ້ບໍລິສຸດ.

20 ແທ້ຈິງແລ້ວ, ເພິ່ນໄດ້ສັ່ງພວກເຂົາວ່າບໍ່ໃຫ້ [ກ]ສັ່ງສອນສິ່ງອື່ນນອກຈາກຈະເປັນເລື່ອງຂອງການກັບໃຈ ແລະ ມີສັດທາໃນພຣະຜູ້ເປັນເຈົ້າ, ຜູ້ໄດ້ໄຖ່ຜູ້ຄົນຂອງພຣະອົງ.

21 ແລະ ເພິ່ນໄດ້ສັ່ງພວກເຂົາວ່າ ບໍ່ຄວນມີ [ກ]ການຂັດແຍ້ງກັນ ແຕ່ຄວນມຸ້ງຫາດ້ວຍຕາ [ຂ]ດຽວກັນ ໂດຍມີສັດທາ ແລະ ບັບຕິສະມາດຽວ, ໂດຍໃຫ້ໃຈຂອງພວກເຂົາຜູກພັນກັນໄວ້ໃນ [ຄ]ຄວາມເປັນອັນໜຶ່ງດຽວກັນ ແລະ ໃນຄວາມຮັກທີ່ມີຕໍ່ກັນ.

22 ແລະ ເພິ່ນໄດ້ສັ່ງພວກເຂົາໃຫ້ສັ່ງສອນເຊັ່ນນັ້ນ. ແລະ ໂດຍວິທີນັ້ນພວກເຂົາຈຶ່ງຈະກາຍ [ກ]ເປັນລູກຂອງພຣະເຈົ້າ.

23 ແລະ ເພິ່ນໄດ້ສັ່ງພວກເຂົາວ່າ ພວກເຂົາຄວນຖືວັນ [ກ]ຊະບາໂຕ, ແລະ ຮັກສາມັນໃຫ້ສັກສິດ, ແລະ ທຸກໆມື້ພວກເຂົາຄວນຖວາຍຄວາມຂອບພຣະໄທແດ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.

24 ແລະ ເພິ່ນໄດ້ສັ່ງພວກເຂົາອີກວ່າ ປະ

---

13 *ງ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຈ* ມຊ 4:2; 5:9.
14 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ.
16 *ກ* ມຊຢ 25:18.
*ຂ* ຄມພ ພຣະຄຸນ.
17 *ກ* 3 ນຟ 26:21; 27:3–8. ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
18 *ກ* ຄມພ ຖານະປະໂລຫິດ.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ.
20 *ກ* ຄພ 15:6; 18:14–16.
21 *ກ* 3 ນຟ 11:28–30. ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຂ* ມທ 6:22; ຄພ 88:67–68.
*ຄ* ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
22 *ກ* ມຊຢ 5:5–7; ມຊ 6:64–68.
23 *ກ* ມຊຢ 13:16–19; ຄພ 59:9–12.

ໂລຫິດຜູ້ທີ່ເພິ່ນແຕ່ງຕັ້ງໄວ້ຄວນ [ກ]ທຳງານ
ລ້ຽງຕົວເອງດ້ວຍມືຂອງຕົນ.
25 ແລະ ທຸກອາທິດມີມື້ໜຶ່ງທີ່ຕັ້ງໄວ້ເພື່ອ
ພວກເຂົາຈະມາຮ່ວມກັນເພື່ອສິດສອນຜູ້
ຄົນ, ແລະ ເພື່ອ [ກ]ນະມັດສະການພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ,
ແລະ ໃຫ້ມາຊຸມນຸມກັນເລື້ອຍໆເທົ່າທີ່ຈະ
ເຮັດໄດ້.
26 ແລະ ປະໂລຫິດຈະບໍ່ອາໄສຜູ້ຄົນໃຫ້
ມາຄ້ຳຈູນຕົນ; ແຕ່ດ້ວຍການທຳງານຂອງ
ພວກເຂົາ, ພວກເຂົາຈະໄດ້ຮັບ [ກ]ພຣະຄຸນ
ຂອງພຣະເຈົ້າ, ເພື່ອພວກເຂົາຈະໄດ້ເຂັ້ມ
ແຂງຫລາຍຂຶ້ນໃນພຣະວິນຍານ, ໂດຍມີ
[ຂ]ຄວາມຮູ້ເຖິງພຣະເຈົ້າ, ເພື່ອວ່າພວກເຂົາ
ຈະໄດ້ສິດສອນດ້ວຍອຳນາດ ແລະ ສິດ
ອຳນາດຈາກພຣະເຈົ້າ.
27 ແລະ ອີກຢ່າງໜຶ່ງ ແອວມາສັ່ງວ່າ ຜູ້
ຄົນຂອງສາດສະໜາຈັກຄວນໃຫ້ເຂົ້າຂອງ
[ກ]ຂອງຕົນຕາມທີ່ເຂົາມີ; ຖ້າຫາກເຂົາມີ
ຫລາຍກໍຄວນໃຫ້ຫລາຍ; ແລະ ສຳລັບຜູ້ທີ່
ມີໜ້ອຍກໍຄວນໃຫ້ໜ້ອຍ; ແລະ ສຳລັບຜູ້ທີ່
ບໍ່ມີ ຄວນເອົາໃຫ້ເຂົາ.
28 ແລະ ໂດຍວິທີນີ້ເຂົາຄວນໃຫ້ເຂົ້າ
ຂອງ ຂອງເຂົາດ້ວຍຄວາມສະໝັກໃຈ ແລະ
ດ້ວຍຄວາມປາດຖະໜາດີ ຕໍ່ພຣະເຈົ້າ,
ແລະ ກັບປະໂລຫິດເຫລົ່ານີ້ຊຶ່ງຂັດສົນ, ແທ້
ຈິງແລ້ວ, ສຳລັບທຸກຄົນທີ່ຂັດສົນ, ແລະ
ເປືອຍເປົ່າ.
29 ແລະ ຕາມນີ້ເພິ່ນໄດ້ເວົ້າກັບພວກ
ເຂົາ ໂດຍ ໄດ້ຮັບບັນຊາຈາກ ພຣະເຈົ້າ;
ແລະ ພວກເຂົາໄດ້ [ກ]ເດີນໄປຢ່າງພາກພູມ
ໃຈຕໍ່ພຣະພັກຂອງພຣະເຈົ້າ, ໂດຍ [ຂ]ການ
ໃຫ້ກັນຕາມຄວາມຈຳເປັນ ແລະ ຄວາມ
ຕ້ອງການຂອງເຂົາທາງໂລກ ແລະ ທາງ
ວິນຍານ.
30 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ທັງໝົດນີ້ໄດ້ເຮັດຢູ່ໃນມໍມອນ, ແທ້ຈິງ
ແລ້ວ, ຢູ່ຂ້າງ [ກ]ນ້ຳມໍມອນ ໃນປ່າທີ່ຢູ່ໃກ້
ນ້ຳມໍມອນ; ແທ້ຈິງແລ້ວ, ບ່ອນມໍມອນ, ນ້ຳ
ມໍມອນ, ປ່າມໍມອນນັ້ນສວຍງາມພຽງໃດ
ໃນສາຍຕາຂອງພວກເຂົາ ຜູ້ມາຫາຄວາມ
ຮູ້ເລື່ອງພຣະຜູ້ໄຖ່ຂອງພວກເຂົາ; ແທ້ຈິງ
ແລ້ວ, ແລະ ພວກເຂົາເປັນສຸກພຽງໃດ,
ເພາະພວກເຂົາຈະຮ້ອງເພງສັນລະເສີນ
ພຣະອົງຕະຫລອດໄປ.
31 ແລະ ສິ່ງເຫລົ່ານີ້ເປັນໄປທີ່ [ກ]ຊາຍ
ແດນຂອງແຜ່ນດິນ ເພື່ອກະສັດຈະບໍ່ໄດ້ຮູ້
ເລື່ອງຂອງພວກເຂົາ.
32 ແຕ່ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອກະສັດຮູ້ວ່າມີການເຄື່ອນໄຫວໃນ
ບັນດາຜູ້ຄົນ ຈຶ່ງໄດ້ສັ່ງຄົນໃຊ້ຂອງເພິ່ນ
ອອກໄປຕິດຕາມເບິ່ງຄົນເຫລົ່ານັ້ນ. ສະນັ້ນ
ໃນມື້ທີ່ພວກເຂົາກຳລັງຮ່ວມຊຸມນຸມກັນ
ເພື່ອຟັງພຣະຄຳຂອງພຣະຜູ້ເປັນເຈົ້າຢູ່ນັ້ນ
ມັນຈຶ່ງລ່ວງຮູ້ເຖິງກະສັດ.
33 ແລະ ບັດນີ້ກະສັດເວົ້າວ່າ ແອວມາ
ກຳລັງຍຸຍົງຜູ້ຄົນໃຫ້ມີການກະບົດຕໍ່ເພິ່ນ;
ສະນັ້ນ ເພິ່ນຈຶ່ງສັ່ງກອງທັບຂອງເພິ່ນໃຫ້
ໄປທຳລາຍພວກນັ້ນເສຍ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາ ແລະ ຜູ້ຄົນຂອງພຣະຜູ້ເປັນເຈົ້າ
ໄດ້ຮັບ [ກ]ການເຕືອນເຖິງການມາຂອງກອງ

24 *ກ* ກຈກ 20:33–35; ມຊຢ 27:3–5; ແອວ 1:26.
25 *ກ* ຄມພ ນະມັດສະການ.
26 *ກ* ຄມພ ພຣະຄຸນ.
*ຂ* ຄມພ ຄວາມຮູ້.
27 *ກ* ກຈກ 2:44–45; 4 ນຟ 1:3.
29 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ຂ* ຄມພ ຄວາມຜາສຸກ.
30 *ກ* ມຊຢ 26:15.
31 *ກ* ມຊຢ 18:4.
34 *ກ* ມຊຢ 23:1.

ທັບຂອງກະສັດ; ສະນັ້ນ ພວກເຂົາຈຶ່ງເອົາ
ຜ້າເຕັ້ນ ແລະ ພາຄອບຄົວຂອງພວກເຂົາ
ອອກໄປ ໃນຖິ່ນແຫ້ງແລ້ງກັນດານ.
35 ແລະ ພວກເຂົາມີຈຳນວນຢູ່ສີ່ຮ້ອຍ
ຫ້າສິບຄົນ.

ບົດທີ 19

*ກີເດໂອນພະຍາຍາມຂ້າກະສັດໂນອາ—ຊາວເລມັນມາຮຸກຮານແຜ່ນດິນ—ກະສັດໂນອາຕາຍຢ່າງທຸກທໍລະມານຍ້ອນໄຟ—ລິມໄຮປົກຄອງຢ່າງຂູດຮີດພາສີອາກອນ. ປະມານ 145–121 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງ
ທັບຂອງກະສັດໄດ້ກັບຄືນມາຈາກການ
ຊອກຫາຜູ້ຄົນຂອງພຣະຜູ້ເປັນເຈົ້າ ແຕ່ບໍ່
ໄດ້ຮັບຜົນ.
2 ແລະ ບັດນີ້ຈົ່ງເບິ່ງ, ກຳລັງກອງທັບ
ຂອງກະສັດມີໜ້ອຍດຽວໂດຍລົດຈຳນວນ
ລົງ, ແລະ ເລີ່ມມີການແບ່ງແຍກໃນບັນດາ
ຜູ້ຄົນທີ່ເຫລືອຢູ່.
3 ແລະ ຄົນສ່ວນໜ້ອຍເລີ່ມເວົ້າຂູ່ກຄາມ
ກະສັດ, ແລະ ເລີ່ມມີການຂັດແຍ້ງໃນບັນ
ດາພວກເຂົາ.
4 ແລະ ບັດນີ້ມີຊາຍຄົນໜຶ່ງໃນບັນດາ
ພວກເຂົາຊື່ວ່າ ກີເດໂອນ ແລະ ລາວເປັນ
ຄົນແຂງແຮງ ແລະ ເປັນສັດຕູຂອງກະສັດ,
ສະນັ້ນ ລາວຈຶ່ງຖອດດາບຂອງລາວອອກ
ມາ, ແລະ ສາບານດ້ວຍຄວາມຄຽດແຄ້ນ
ວ່າ ລາວຈະຂ້າກະສັດຖິ້ມເສຍ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກີເດໂອນໄດ້ຕໍ່ສູ້ກັບກະສັດ; ແລະ ເມື່ອ
ກະສັດເຫັນວ່າກີເດໂອນມີກຳລັງຫລາຍ
ກວ່າເພິ່ນ, ຈຶ່ງໄດ້ປົບໜີ ແລະ ຂຶ້ນໄປເທິງ
[a]ຫໍສູງໃກ້ພຣະວິຫານ.
6 ແລະ ກີເດໂອນໄດ້ໄລ່ຕາມກະສັດໄປ
ແລະ ກຳລັງຈະຂຶ້ນຫໍສູງເພື່ອໄປຂ້າກະສັດ,
ແລະ ກະສັດໄດ້ກວາດສາຍຕາໄປທາງ
ແຜ່ນດິນເຊັມລອນ, ແລະ ຈົ່ງເບິ່ງ, ກອງທັບ
ຂອງຊາວເລມັນຢູ່ໃນຊາຍແດນຂອງແຜ່ນ
ດິນຂອງຕົນແລ້ວ.
7 ແລະ ບັດນີ້ກະສັດໄດ້ຮ້ອງອອກມາ
ດ້ວຍຄວາມເຈັບປວດຂອງຈິດວິນຍານ
ວ່າ: ກີເດໂອນ, ຈົ່ງໄວ້ຊີວິດຂອງເຮົາເຖີດ,
ເພາະວ່າຊາວເລມັນກຳລັງເຂົ້າມາ ແລະ
ພວກເຂົາຈະທຳລາຍພວກເຮົາ; ແທ້ຈິງ
ແລ້ວ, ພວກເຂົາຈະທຳລາຍຜູ້ຄົນຂອງ
ເຮົາ.
8 ແລະ ບັດນີ້ກະສັດບໍ່ໄດ້ເປັນຫ່ວງຜູ້ຄົນ
ຫລາຍກວ່າເປັນຫ່ວງນຳຊີວິດຂອງຕົນເອງ
ເລີຍ; ເຖິງຢ່າງໃດກໍຕາມ ກີເດໂອນກໍໄດ້ໄວ້
ຊີວິດຂອງກະສັດ.
9 ແລະ ກະສັດໄດ້ສັ່ງໃຫ້ຜູ້ຄົນໜີໄປ
ກ່ອນຊາວເລມັນຈະມາຮອດ, ແລະ ຕົວ
ເພິ່ນເອງໄດ້ອອກໄປກ່ອນແລ້ວ, ແລະ
ພວກເຂົາໄດ້ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນ
ດານພ້ອມດ້ວຍພວກຜູ້ຍິງ ແລະ ເດັກນ້ອຍ
ຂອງພວກເຂົາ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາວເລມັນໄດ້ໄລ່ຕາມພວກເຂົາໄປຈົນທັນ
ແລະ ເລີ່ມຂ້າພວກເຂົາ.
11 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ກະສັດອອກຄຳສັ່ງກັບຜູ້ຄົນວ່າ ຜູ້ຊາຍທັງ
ໝົດຄວນປະຖິ້ມເມຍຂອງພວກເຂົາ ແລະ
ລູກຂອງພວກເຂົາໄວ້, ແລະ ໜີໄປກ່ອນ
ຊາວເລມັນຈະມາຮອດ.
12 ແລະ ບັດນີ້ມີຫລາຍຄົນທີ່ບໍ່ຍອມປະ
ຖິ້ມພວກເຂົາ, ແຕ່ຈະຢູ່ນຳ ແລະ ຕາຍນຳ

**19** 5*a* ມຊຢ 11:12.

ພວກເຂົາດີກວ່າ. ສ່ວນຄົນອື່ນໆໄດ້ປະຖິ້ມ
ເມຍຂອງພວກເຂົາ ແລະ ລູກຂອງພວກ
ເຂົາ ແລະ ໜີໄປ.
13 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກທີ່ຢູ່ກັບເມຍຂອງພວກເຂົາ ແລະ ລູກ
ຂອງພວກເຂົາໄດ້ບອກໃຫ້ພວກລູກສາວຜູ້
ສວຍງາມຂອງພວກເຂົາອອກໄປ ແລະ ວິງ
ວອນຊາວເລມັນເພື່ອບໍ່ໃຫ້ຂ້າພວກເຂົາ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນມີຄວາມເມດຕາສົງສານພວກເຂົາ
ເພາະພວກເຂົາຫລົງໄຫລກັບຄວາມສວຍ
ງາມຂອງພວກຜູ້ຍິງເຫລົ່ານັ້ນ.
15 ສະນັ້ນ ຊາວເລມັນຈຶ່ງໄວ້ຊີວິດພວກ
ເຂົາ, ແລະ ຈັບເອົາພວກເຂົາໄປເປັນຊະ
ເລີຍ ແລະ ພາພວກເຂົາກັບຄືນໄປຫາ
ແຜ່ນດິນນີໄຟ, ແລະ ອະນຸຍາດໃຫ້ພວກ
ເຂົາເປັນເຈົ້າຂອງແຜ່ນດິນໂດຍມີເງື່ອນ
ໄຂວ່າ ພວກເຂົາຕ້ອງມອບກະສັດໂນອາ
ໃຫ້ຢູ່ໃນກຳມືຂອງຊາວເລມັນ, ພ້ອມທັງ
ຊັບສົມບັດຂອງພວກເຂົາ ຈົນກະທັ້ງເຄິ່ງ
ໜຶ່ງຂອງສິ່ງຂອງທັງໝົດທີ່ຜູ້ຄົນເປັນເຈົ້າ
ຂອງ, ເຄິ່ງໜຶ່ງຂອງຄຳຂອງພວກເຂົາ,
ແລະ ເຄິ່ງໜຶ່ງຂອງເງິນຂອງພວກເຂົາ,
ແລະ ສິ່ງທີ່ມີຄ່າທັງໝົດ, ແລະ ພວກເຂົາ
ຕ້ອງເສຍຊ່ວຍໃຫ້ແກ່ກະສັດຂອງຊາວ
ເລມັນແຕ່ລະປີ.
16 ແລະ ບັດນີ້ໃນບັນດາພວກທີ່ຖືກເອົາ
ໄປເປັນຊະເລີຍນັ້ນ ມີລູກຊາຍຄົນໜຶ່ງຂອງ
ກະສັດຊື່ວ່າ [a]ລິມໄຮ.
17 ແລະ ບັດນີ້ລິມໄຮບໍ່ຢາກໃຫ້ບິດາ
ຂອງເພິ່ນຖືກທຳລາຍ; ເຖິງຢ່າງໃດກໍຕາມ,
ເພິ່ນກໍຮູ້ເຖິງຄວາມຊົ່ວຮ້າຍຂອງບິດາຕົນ,
ຕົວເພິ່ນເອງເປັນຄົນຊອບທຳ.
18 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ກີເດໂອນໄດ້ສົ່ງຄົນໄປໃນຖິ່ນແຫ້ງແລ້ງ
ກັນດານເປັນການລັບເພື່ອຄົ້ນຫາກະສັດ
ແລະ ຜູ້ທີ່ຢູ່ກັບເພິ່ນ. ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ຄົນຂອງກີເດໂອນໄດ້ພົບຄົນທັງ
ໝົດໃນຖິ່ນແຫ້ງແລ້ງກັນດານຍົກເວັ້ນແຕ່
ກະສັດກັບພວກປະໂລຫິດຂອງເພິ່ນເທົ່າ
ນັ້ນ.
19 ບັດນີ້ຄົນເຫລົ່ານັ້ນໄດ້ສາບານຢູ່ໃນ
ໃຈວ່າ ພວກເຂົາຈະກັບຄືນໄປຫາແຜ່ນດິນ
ນີໄຟ, ແລະ ຖ້າຫາກເມຍຂອງພວກເຂົາ
ແລະ ລູກຂອງພວກເຂົາຖືກຂ້າຕາຍ, ແລະ
ຄົນທີ່ຢູ່ກັບພວກເຂົາຖືກຂ້າຕາຍ, ແລ້ວ
ພວກເຂົາຈະພະຍາຍາມແກ້ແຄ້ນແທນ,
ແລະ ຕາຍກັບພວກນັ້ນສາດີກວ່າ.
20 ແລະ ກະສັດ ໄດ້ສັ່ງພວກເຂົາບໍ່ໃຫ້
ກັບຄືນໄປ; ຈຶ່ງເຮັດໃຫ້ພວກເຂົາຄຽດແຄ້ນ
ໃຫ້ເພິ່ນ, ແລະ ພວກເຂົາໄດ້ທໍລະມານ
ແລະ [a]ຂ້າກະສັດດ້ວຍໄຟ.
21 ແລະ ພວກເຂົາກຳລັງຈະເອົາພວກ
ປະໂລຫິດໄປຂ້ານຳອີກ, ແຕ່ພວກເຂົາໄດ້
ປົບໜີໄປກ່ອນ.
22 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາກຳລັງຈະກັບຄືນໄປຫາແຜ່ນດິນ
ນີໄຟ, ແລະ ພວກເຂົາໄດ້ພົບກັບຄົນຂອງ
ກີເດໂອນ. ແລະ ຄົນຂອງກີເດໂອນໄດ້ເລົ່າ
ເລື່ອງທັງໝົດທີ່ໄດ້ເກີດຂຶ້ນກັບເມຍຂອງ
ພວກເຂົາ ແລະ ລູກຂອງພວກເຂົາໃຫ້ພວກ
ເຂົາຟັງ; ແລະ ວ່າຊາວເລມັນອະນຸຍາດໃຫ້
ພວກເຂົາເປັນເຈົ້າຂອງແຜ່ນດິນໂດຍເສຍ
ຊ່ວຍໃຫ້ແກ່ຊາວເລມັນເຄິ່ງໜຶ່ງຂອງສິ່ງ
ຂອງທັງໝົດທີ່ພວກເຂົາມີ.
23 ແລະ ພວກເຂົາໄດ້ບອກກັບຄົນຂອງ
ກີເດໂອນວ່າ ພວກເຂົາໄດ້ຂ້າກະສັດແລ້ວ,
ແລະ ພວກປະໂລຫິດເຫລົ່ານັ້ນໄດ້ປົບໜີ

16 *ກ* ມຊຢ 7:9.
20 *ກ* ມຊຢ 17:13–19; ແອວ 25:11.

ໄປໄກ ແລະ ໄດ້ໜີເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກພວກເຂົາເສັດພິທີແລ້ວ, ພວກເຂົາກໍ
ກັບ ຄືນ ໄປຫາ ແຜ່ນ ດິນນີໄຟດ້ວຍ ຄວາມ
ຊື່ນຊົມ, ເພາະວ່າເມຍຂອງພວກເຂົາ ແລະ
ລູກຂອງພວກເຂົາບໍ່ໄດ້ຖືກຂ້າ; ແລະ ພວກ
ເຂົາໄດ້ເລົ່າໃຫ້ກີເດໂອນຟັງເຖິງສິ່ງທີ່ພວກ
ເຂົາໄດ້ກະທຳກັບກະສັດ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກະສັດຂອງຊາວເລມັນໃຫ້ [ກ]ຄຳສາບານ
ແກ່ພວກເຂົາວ່າ ຜູ້ຄົນຂອງເພິ່ນຈະບໍ່ຂ້າ
ພວກເຂົາອີກ.
26 ແລະ ລິມໄຮ ໂດຍ ທີ່ ເປັນ ລູກ ຊາຍ
ຂອງກະສັດ, ດັ່ງນັ້ນຜູ້ຄົນ [ກ]ຈຶ່ງໄດ້ມອບລາ
ຊາອານາຈັກໃຫ້ເພິ່ນ, ແລະ ເພິ່ນໄດ້ໃຫ້ຄຳ
ສາບານຕໍ່ກະສັດຂອງຊາວເລມັນອີກວ່າ ຜູ້
ຄົນຂອງເພິ່ນຈະຕ້ອງເສຍຊ່ວຍເຄິ່ງໜຶ່ງ
ຂອງສິ່ງຂອງທັງໝົດທີ່ພວກເຂົາມີ.
27 ແລະ ເຫດການ ໄດ້ ບັງ ເກີດຂຶ້ນຄື
ລິມໄຮເລີ່ມສະຖາປະນາອານາຈັກ ແລະ
ສະຖາປະນາສັນຕິສຸກຂຶ້ນໃນບັນດາຜູ້ຄົນ
ຂອງເພິ່ນ.
28 ແລະ ກະສັດຂອງຊາວເລມັນໄດ້ຈັດ
ຍາມໄວ້ທົ່ວແຜ່ນດິນ ເພື່ອກັກຜູ້ຄົນຂອງ
ລິມໄຮໄວ້ໃນແຜ່ນດິນ ເພື່ອບໍ່ໃຫ້ພວກເຂົາ
ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ; ແລະ
ເພິ່ນໄດ້ລ້ຽງດູພວກຍາມນັ້ນດ້ວຍເຄື່ອງ
ຊ່ວຍຈາກຊາວນີໄຟ.
29 ແລະ ບັດນີ້ກະສັດລິມໄຮໄດ້ມີສັນຕິ
ສຸກຢູ່ໃນລາຊາອານາຈັກຂອງເພິ່ນຕິດຕໍ່
ກັນເປັນເວລາສອງປີ, ຊຶ່ງຊາວເລມັນບໍ່ໄດ້
ບຸງດບຸງນ ແລະ ບໍ່ພະຍາຍາມທຳຮ້າຍພວກ
ເຂົາ.

## ບົດທີ 20

*ພວກລູກສາວບາງຄົນຂອງຊາວເລມັນຖືກ ລັກພາຕົວ ໄປໂດຍພວກປະໂລຫິດຂອງ ກະສັດໂນອາ—ຊາວເລມັນກໍ່ສົງຄາມກັບ ລິມໄຮ ແລະ ຜູ້ຄົນຂອງເພິ່ນ—ກອງທັບ ຊາວເລມັນຖືກຕີໃຫ້ຖອຍໄປ ແລະ ໄດ້ ສະຫງົບລົງ. ປະມານ 145–123 ປີກ່ອນ ຄ.ສ.*

1 ບັດນີ້ມີບ່ອນໜຶ່ງໃນເຊັມລອນ ຊຶ່ງເປັນ
ບ່ອນ ພວກລູກສາວຂອງຊາວເລມັນໄປ
ລວມຕົວກັນ ເພື່ອຮ້ອງເພງ, ແລະ ເຕັ້ນລຳ,
ແລະ ເພື່ອຄວາມມ່ວນຊື່ນນຳກັນ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ມື້ໜຶ່ງ
ພວກຜູ້ສາວຈຳນວນໜຶ່ງໄດ້ໄປເຕົ້າໂຮມ
ກັນເພື່ອເຕັ້ນລຳ ແລະ ຮ້ອງເພງ.
3 ແລະ ບັດນີ້ ພວກປະໂລຫິດຂອງ
ກະສັດໂນອາ, ໂດຍມີຄວາມລະອາຍໃຈທີ່
ຈະກັບຄືນໄປຫາເມືອງນີໄຟ, ແທ້ຈິງແລ້ວ,
ພວກເຂົາຢ້ານວ່າພວກເຂົາຈະຖືກຜູ້ຄົນ
ຂ້າ, ສະນັ້ນ ພວກເຂົາຈຶ່ງບໍ່ກ້າກັບຄືນໄປ
ຫາເມຍຂອງຕົນ ແລະ ລູກຂອງຕົນ.
4 ແລະ ໂດຍທີ່ຢູ່ໃນຖິ່ນແຫ້ງແລ້ງກັນ
ດານ, ແລະ ໂດຍທີ່ໄດ້ເຫັນໄດ້ພວກລູກ
ສາວຂອງຊາວເລມັນ, ພວກເຂົາຈຶ່ງລີ້ຈອບ
ເບິ່ງພວກນາງເຫລົ່ານັ້ນ;
5 ແລະ ເວລາທີ່ມີນາງສາວບໍ່ຫລາຍຄົນ
ມາເຕົ້າໂຮມກັນເພື່ອເຕັ້ນລຳ, ພວກເຂົາ
ຈຶ່ງອອກມາຈາກບ່ອນລີ້ ແລະ ຈັບເອົາ
ພວກນາງ ແລະ ພາໄປໃນຖິ່ນແຫ້ງແລ້ງ
ກັນດານ; ແທ້ຈິງແລ້ວ, ແລະ ພວກເຂົາໄດ້
ພາພວກລູກສາວຂອງຊາວເລມັນຊາວສີ່
ຄົນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ

25ກ ມຊຢ 21:3.
26ກ ມຊຢ 7:9.

ຊາວ ເລມັນ ຮູ້ ວ່າ ພວກ ລູກ ສາວ ຂອງ ຕົນ ຫາຍຕົວໄປ, ພວກເຂົາກໍເລີຍມີຄວາມຄຽດ ແຄ້ນ ໃຫ້ຜູ້ຄົນ ຂອງລິມໄຮ, ເພາະ ຄິດວ່າ ເປັນນ້ຳມືຂອງຜູ້ຄົນຂອງລິມໄຮ.

7 ສະນັ້ນ ພວກເຂົາຈຶ່ງສົ່ງກອງທັບຂອງ ຕົນອອກໄປ; ແທ້ຈິງແລ້ວ, ຕົວກະສັດເອງ ກໍອອກໜ້າຜູ້ຄົນໄປ; ແລະ ພວກເຂົາໄດ້ ຂຶ້ນໄປຫາແຜ່ນດິນນີໄຟເພື່ອທຳລາຍຜູ້ຄົນ ຂອງລິມໄຮ.

8 ແລະ ບັດນີ້ ເມື່ອ ລິມໄຮ ເຫັນ ກອງ ທັບ ຂອງຊາວເລມັນຈາກຫໍສູງ, ແລະ ເພິ່ນເຫັນ ການຕຽມເຮັດເສິກທັງໝົດຂອງພວກເຂົາ; ສະນັ້ນ ເພິ່ນຈຶ່ງໄດ້ເຕົ້າໂຮມຜູ້ຄົນຂອງເພິ່ນ ແລະ ດັກຖ້າພວກນັ້ນຢູ່ໃນທົ່ງ ແລະ ໃນ ປ່າ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ ຊາວເລມັນມາເຖິງ, ຜູ້ຄົນຂອງລິມໄຮເລີ່ມ ຕໍ່ສູ້ກັບພວກນັ້ນຈາກບ່ອນດັກຖ້າ, ແລະ ເລີ່ມຂ້າພວກເຂົາ.

10 ແລ ະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ການສູ້ຮົບ ເລີ່ມຮ້າຍ ແຮງໜັກຂຶ້ນ, ເພາະ ວ່າພວກເຂົາຕໍ່ສູ້ກັນຄືກັບ ໂຕສິງຕໍ່ສູ້ເພື່ອ ເຫຍື່ອຂອງມັນ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ ຄົນຂອງລິມໄຮເລີ່ມໄລ່ຊາວເລມັນໄປທາງ ໜ້າຂອງພວກເຂົາ; ເຖິງແມ່ນວ່າຜູ້ຄົນຂອງ ລິມໄຮມີຈຳນວນໜ້ອຍກວ່າເຄິ່ງໜຶ່ງຂອງ ຊາວເລມັນກໍຕາມ; ແຕ່ພວກເຂົາກໍ [ກ]ຕໍ່ສູ້ ເພື່ອຊີວິດຂອງຕົນ ແລະ ເພື່ອເມຍຂອງ ພວກເຂົາ, ແລະ ເພື່ອລູກຂອງພວກເຂົາ; ສະນັ້ນ ພວກເຂົາຈຶ່ງໃຊ້ຄວາມພະຍາຍາມ ຕໍ່ສູ້ຄືກັນກັບມັງກອນ.

12 ແ ລ ະ ເ ຫ ດ ກ າ ນ ໄດ້ ບັງ ເກີດ ຂຶ້ນ ຄື ພວກເຂົາໄດ້ເຫັນກະສັດຂອງຊາວເລມັນຢູ່ ໃນບັນດາຄົນທີ່ຖືກຂ້າຕາຍ; ແຕ່ວ່າເພິ່ນບໍ່ ທັນຕາຍ; ພຽງແຕ່ໄດ້ຮັບບາດເຈັບ, ແລະ ຖືກປະຖິ້ມຢູ່ກັບພື້ນດິນ, ສ່ວນຜູ້ຄົນຂອງ ເພິ່ນນັ້ນໄດ້ປົບໜີໄປຢ່າງວ່ອງໄວ.

13 ແລະ ພວກເຂົາໄດ້ນຳເອົາກະສັດມາ ແລະ ພັນບາດແຜໃຫ້, ແລະ ນຳເອົາຕົວ ເພິ່ນຂຶ້ນໄປຢູ່ຕໍ່ໜ້າລິມໄຮ, ແລະ ກ່າວວ່າ: ຈົ່ງເບິ່ງ, ນີ້ຄືກະສັດຂອງຊາວເລມັນ; ໂດຍ ທີ່ໄດ້ຮັບບາດເຈັບ ເພິ່ນຈຶ່ງລົ້ມລົງຢູ່ໃນບັນ ດາຄົນທີ່ຕາຍ, ແລະ ເພິ່ນໄດ້ຖືກປະຖິ້ມ ໄວ້; ແລະ ຈົ່ງເບິ່ງ, ພວກຂ້ານ້ອຍຈຶ່ງໄດ້ນຳ ເອົາຕົວເພິ່ນມາຢູ່ຕໍ່ໜ້າທ່ານ; ແລະ ບັດນີ້ຂໍ ໃຫ້ພວກຂ້ານ້ອຍຂ້າເພິ່ນຖິ້ມເສຍ.

14 ແຕ່ລິມໄຮໄດ້ເວົ້າກັບຄົນຂອງເພິ່ນ ວ່າ: ພວກເຈົ້າຢ່າໄດ້ຂ້າເພິ່ນເລີຍ, ແຕ່ຈົ່ງ ນຳເອົາເພິ່ນມານີ້ ເພື່ອຂ້າພະເຈົ້າຈະໄດ້ ເຫັນເພິ່ນ. ແລະ ພວກເຂົາຈຶ່ງໄດ້ນຳເພິ່ນ ມາ. ແລະ ລິມໄຮໄດ້ກ່າວກັບເພິ່ນວ່າ: ເຫດ ໃດທ່ານຈຶ່ງຂຶ້ນມາກໍ່ສົງຄາມກັບຜູ້ຄົນຂອງ ຂ້າພະເຈົ້າ? ຈົ່ງເບິ່ງ, ຜູ້ຄົນຂອງຂ້າພະເຈົ້າ ບໍ່ໄດ້ເຮັດຜິດ [ກ]ຄຳສາບານທີ່ຂ້າພະເຈົ້າໄດ້ ເຮັດໄວ້ກັບຜູ້ຄົນຂອງທ່ານເລີຍ; ສະນັ້ນ, ເປັນຫຍັງທ່ານຈຶ່ງເຮັດຜິດຄຳສາບານຊຶ່ງ ທ່ານໄດ້ເຮັດໄວ້ກັບຜູ້ຄົນຂອງຂ້າພະເຈົ້າ?

15 ແລະ ບັດນີ້ກະສັດຂອງຊາວເລມັນ ໄດ້ກ່າວວ່າ: ຂ້າພະເຈົ້າເຮັດຜິດຄຳສາບານ ເພາະວ່າຜູ້ຄົນຂອງທ່ານໄດ້ລັກພາພວກ ລູກສາວຂອງຜູ້ຄົນຂອງຂ້າພະເຈົ້າໄປ; ສະນັ້ນ, ດ້ວຍຄວາມຄຽດແຄ້ນ ຂ້າພະເຈົ້າ ຈຶ່ງໄດ້ສັ່ງໃຫ້ຜູ້ຄົນຂອງຂ້າພະເຈົ້າຂຶ້ນມາກໍ່ ສົງຄາມກັບຜູ້ຄົນຂອງທ່ານ.

16 ແລະ ບັດນີ້ລິມໄຮບໍ່ຮູ້ຈັກຫຍັງເລີຍ ກ່ຽວກັບເລື່ອງນີ້; ສະນັ້ນ ເພິ່ນຈຶ່ງກ່າວ ວ່າ: ຂ້າພະເຈົ້າຈະສອບສວນໃນບັນດາຜູ້

**20** 11 *ກ* ແອວ 43:45.

14 *ກ* ມຊຢ 19:25–26.

ຄົນຂອງຂ້າພະເຈົ້າ ຖ້າຜູ້ໃດກໍຕາມທີ່ເຮັດ
ເລື່ອງນີ້ຈະຕ້ອງຕາຍ. ສະນັ້ນ ເພິ່ນຈຶ່ງສັ່ງ
ໃຫ້ກວດຄົ້ນໃນບັນດາຜູ້ຄົນຂອງເພິ່ນ.
17 ບັດ ນີ້ ເມື່ອ ກກິເດໂອນ ໄດ້ ຍິນ ເລື່ອງ
ເຫລົ່ານີ້ແລ້ວ, ໂດຍ ທີ່ລາວ ເປັນ ທະຫານ
ຂອງກະສັດ, ລາວຈຶ່ງອອກມາ ແລະ ກ່າວ
ກັບ ກະສັດ ວ່າ: ຂ້ານ້ອຍ ຂໍ ໃຫ້ ທ່ານຢຸດ
ກ່ອນ, ແລະ ຢ່າໄດ້ສອບສວນຜູ້ຄົນພວກນີ້,
ແລະ ຢ່າໄດ້ຖືວ່າເປັນຄວາມຜິດຂອງຄົນ
ພວກນີ້ເລີຍ.
18 ເພາະທ່ານຈື່ຈຳພວກປະໂລຫິດຂອງ
ບິດາຂອງທ່ານ, ຜູ້ທີ່ຜູ້ຄົນພວກນີ້ພະຍາ
ຍາມທຳລາຍນັ້ນໄດ້ບໍ? ແລະ ພວກເຂົາບໍ່
ໄດ້ຢູ່ໃນຖິ່ນແຫ້ງແລ້ງກັນດານບໍ? ແລະ ບໍ່
ແມ່ນພວກເຂົານີ້ບໍທີ່ເປັນຄົນມາລັກເອົາ
ພວກລູກສາວຂອງຊາວເລມັນໄປ?
19 ແລະ ບັດນີ້, ຈົ່ງເບິ່ງ, ແລະ ຈົ່ງເລົ່າ
ເລື່ອງທັງໝົດນີ້ໃຫ້ກະສັດຂອງຊາວເລມັນ
ຟັງ, ເພື່ອເພິ່ນຈະໄດ້ບອກໃຫ້ຜູ້ຄົນຂອງ
ເພິ່ນເຊົາຄຽດແຄ້ນໃຫ້ພວກເຮົາ; ເພາະຈົ່ງ
ເບິ່ງ ພວກເຂົາກຳລັງຕຽມທະຫານຢູ່ເພື່ອ
ຈະມາສູ້ຮົບກັບພວກເຮົາອີກ; ແລະ ຈົ່ງເບິ່ງ
ພວກເຮົາກໍມີກຳລັງພຽງໜ້ອຍດຽວ.
20 ແລະ ຈົ່ງເບິ່ງພວກເຂົາຍົກກອງທັບ
ມາດ້ວຍກຳລັງທະຫານອັນຫລວງຫລາຍ;
ແລະ ຖ້າຫາກກະສັດບໍ່ເຮັດໃຫ້ພວກເຂົາ
ເຊົາຄຽດແຄ້ນ ພວກເຮົາຈະຕ້ອງຕາຍ.
21 ເພາະວ່າຄຳເວົ້າຂອງອະບິນາໄດ ຊຶ່ງ
ເພິ່ນໄດ້ທຳນາຍໄວ້ກັບພວກເຮົານັ້ນ ກເກີດ
ເປັນຈິງແລ້ວ—ແລະ ເລື່ອງທັງໝົດນີ້ເກີດ
ຂຶ້ນຍ້ອນວ່າພວກເຮົາບໍ່ຍອມເຊື່ອຟັງພຣະ
ຄຳຂອງພຣະຜູ້ເປັນເຈົ້າ, ແລະ ບໍ່ຫັນໜ້າໜີ
ຈາກຄວາມຊົ່ວຮ້າຍຂອງພວກເຮົາແມ່ນບໍ?
22 ແລະ ບັດນີ້ຂໍໃຫ້ພວກເຮົາຈົ່ງຮຽກ
ຮ້ອງໃຫ້ກະສັດເຊົາຄຽດແຄ້ນສາ, ແລະ
ພວກເຮົາຈະເຮັດຕາມຄຳສາບານ ຊຶ່ງພວກ
ເຮົາເຮັດໄວ້ກັບເພິ່ນ; ເພາະວ່າພວກເຮົາຖື
ວ່າຢູ່ໃນຄວາມເປັນທາດຍ່ອມເປັນການດີ
ກວ່າທີ່ຈະເສຍຊີວິດໄປ; ສະນັ້ນ, ພວກເຮົາ
ຈົ່ງຢຸດການນອງເລືອດນີ້ເສຍເຖີດ.
23 ແລະ ບັດນີ້ລິມໄຮໄດ້ເລົ່າເລື່ອງທັງ
ໝົດກ່ຽວກັບບິດາຂອງເພິ່ນ ແລະ ກ່ຽວ
ກັບ ກພວກປະໂລຫິດທີ່ໄດ້ໜີເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານໃຫ້ກະສັດຂອງຊາວ
ເລມັນຟັງ, ແລະ ລົງຄວາມເຫັນວ່າພວກ
ນັ້ນໄດ້ລັກພາພວກລູກສາວຂອງເຂົາເຈົ້າ
ໄປ.
24 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກະສັດໄດ້ເຊົາໃຈຮ້າຍໃຫ້ຜູ້ຄົນຂອງເພິ່ນ;
ແລະ ເພິ່ນກ່າວກັບພວກເຂົາວ່າ: ໃຫ້ພວກ
ເຮົາອອກໄປພົບກັບຜູ້ຄົນ ຂອງ ຂ້າ ພະ
ເຈົ້າ ໂດຍບໍ່ມີອາວຸດ; ແລະ ຂ້າພະເຈົ້າຂໍ
ສາບານກັບພວກທ່ານດ້ວຍຄຳສາບານວ່າ
ຜູ້ຄົນຂອງຂ້າພະເຈົ້າຈະບໍ່ຂ້າຜູ້ຄົນຂອງ
ພວກທ່ານ.
25 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ຕິດຕາມກະສັດອອກໄປເພື່ອ
ພົບກັບຊາວເລມັນໂດຍບໍ່ມີອາວຸດ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້
ພົບກັບຊາວເລມັນ; ແລະ ກະສັດຂອງຊາວ
ເລມັນເອງໄດ້ຄຸເຂົ່າລົງຕໍ່ໜ້າຜູ້ຄົນຂອງ
ເພິ່ນ, ແລະ ໄດ້ວິງວອນແທນຜູ້ຄົນຂອງ
ລິມໄຮ.
26 ແລະ ເມື່ອຊາວເລມັນເຫັນວ່າຜູ້ຄົນ
ຂອງລິມໄຮບໍ່ມີອາວຸດ, ຈຶ່ງມີ ກຄວາມເມດ
ຕາສົງສານພວກເຂົາ, ແລະ ເຊົາຄຽດແຄ້ນ,
ແລະ ພວກເຂົາໄດ້ກັບຄືນໄປຫາແຜ່ນດິນ
ພ້ອມດ້ວຍກະສັດຂອງຕົນຢ່າງສັນຕິ.

17 *ກ* ມຊຢ 19:4–8.
21 *ກ* ມຊຢ 12:1–8.
23 *ກ* ມຊຢ 19:21, 23.
26 *ກ* ຄມພ ເມດຕາສົງສານ,
ຄວາມເມດຕາສົງສານ.

## ບົດທີ 21

*ຜູ້ຄົນຂອງລິມໄຮໄດ້ພ່າຍແພ້ ແລະ ຖືກຂ້າຕາຍ ໂດຍຊາວເລມັນ—ຜູ້ຄົນຂອງລິມໄຮໄດ້ພົບພໍ້ອຳໂມນ ແລະ ເຫລື້ອມໃສ—ພວກເຂົາບອກອຳໂມນກ່ຽວກັບແຜ່ນຈາລຶກຊາວສີ່ແຜ່ນຂອງຊາວຢາເຣັດ. ປະມານ 122–121 ປີ ກ່ອນ ຄ.ສ.*

1 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ລິມໄຮກັບຜູ້ຄົນຂອງເພິ່ນໄດ້ກັບຄືນໄປຫາເມືອງນີໄຟ, ແລະ ເລີ່ມຢູ່ໃນແຜ່ນດິນຢ່າງສັນຕິ.

2 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ຫລາຍ ມື້ຕໍ່ມາຊາວເລມັນໄດ້ຖືກຍຸຍົງໃຫ້ຄຽດແຄ້ນໃຫ້ຊາວນີໄຟອີກ, ແລະ ພວກເຂົາເລີ່ມເຂົ້າມາໃນຊາຍແດນຮອບແຜ່ນດິນນີໄຟ.

3 ບັດນີ້ພວກເຂົາບໍ່ກ້າຂ້າຊາວນີໄຟຍ້ອນວ່າຄຳສາບານ ຊຶ່ງກະສັດຂອງພວກເຂົາເຮັດໄວ້ກັບລິມໄຮ; ແຕ່ໄດ້ [ກ]ຕົບໜ້າພວກເຂົາ, ແລະ ໃຊ້ສິດອຳນາດກັບພວກເຂົາ; ແລະ ເລີ່ມໃຫ້ [ຂ]ແບກຫາບຂອງໜັກເທິງຫລັງຂອງພວກເຂົາ, ແລະ ໄລ່ພວກເຂົາໄປຄືກັນກັບໂຕລໍທີ່ໂງ່ຈ້າ—

4 ແທ້ຈິງແລ້ວ, ທັງໝົດນີ້ເປັນໄປເພື່ອພຣະຄຳຂອງພຣະຜູ້ເປັນເຈົ້າຈະໄດ້ສຳເລັດ.

5 ແລະ ບັດນີ້ຄວາມທຸກຂອງຊາວນີໄຟນີ້ໜັກໜ່ວງທີ່ສຸດ, ແລະ ບໍ່ມີທາງໃດເລີຍທີ່ຈະປົດປ່ອຍຕົວອອກຈາກກຳມືຂອງຊາວເລມັນໄດ້, ເພາະວ່າຊາວເລມັນອ້ອມພວກເຂົາໄວ້ທຸກດ້ານ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນເລີ່ມຈົ່ມຕໍ່ກະສັດຍ້ອນວ່າຄວາມທຸກຂອງພວກເຂົາ; ແລະ ປາດຖະໜາຈະໄປສູ້ຮົບກັບຊາວເລມັນ. ແລະ ພວກເຂົາໄດ້ອ້ອນວອນກະສັດໂດຍການຈົ່ມວ່າຕ່າງໆນາໆ; ສະນັ້ນ ເພິ່ນຈຶ່ງອະນຸຍາດພວກເຂົາ ວ່າພວກເຂົາຄວນເຮັດຕາມຄວາມປະສົງຂອງພວກເຂົາ.

7 ແລະ ພວກເຂົາໄດ້ມາເຕົ້າໂຮມກັນອີກ, ແລະ ໃສ່ເຄື່ອງປ້ອງກັນ ຂອງພວກເຂົາ, ແລະ ອອກໄປຫາຊາວເລມັນດ້ວຍເຈດຕະນາທີ່ຈະຂັບໄລ່ພວກເຂົາອອກຈາກແຜ່ນດິນຂອງຕົນ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ໄຊຊະນະພວກເຂົາອີກ, ແລະ ໄລ່ພວກເຂົາກັບຄືນໄປ, ແລະ ຂ້າພວກເຂົາຫລາຍຄົນ.

9 ແລະ ບັດນີ້ມີ [ກ]ຄວາມໂສກເສົ້າ ແລະ ການຄ່ຳຄວນຢ່າງໃຫຍ່ຫລວງ ໃນບັນດາຜູ້ຄົນຂອງລິມໄຮ, ແມ່ໝ້າຍໄວ້ທຸກນຳຜົວຂອງນາງ, ແລະ ລູກຊາຍ ແລະ ລູກສາວກໍໄວ້ທຸກນຳບິດາຂອງພວກເຂົາ, ແລະ ອ້າຍນ້ອງກໍໄວ້ທຸກນຳອ້າຍນ້ອງຂອງພວກເຂົາ.

10 ບັດນີ້ມັນມີແມ່ໝ້າຍຈຳນວນຫລວງຫລາຍຢູ່ໃນແຜ່ນດິນ, ແລະ ພວກເຂົາໄດ້ຮ້ອງໄຫ້ຢ່າງສຸດກຳລັງທຸກໆມື້, ເພາະຄວາມຢ້ານກົວຊາວເລມັນຢ່າງໃຫຍ່ຫລວງເກີດກັບພວກເຂົາ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຽງຮ້ອງໄຫ້ຢ່າງບໍ່ຢຸດຢັ້ງຂອງພວກເຂົາໄດ້ຍຸຍົງໃຫ້ຜູ້ຄົນຂອງລິມໄຮທີ່ຍັງເຫລືອຢູ່ຄຽດແຄ້ນໃຫ້ຊາວເລມັນ; ແລະ ເຮັດໃຫ້ພວກເຂົາອອກໄປສູ້ຮົບອີກ, ແຕ່ພວກເຂົາໄດ້ຖືກຂັບໄລ່ກັບຄືນມາ, ໄດ້ຮັບການເສຍຫາຍຢ່າງໜັກ.

12 ແທ້ຈິງແລ້ວ, ພວກເຂົາໄດ້ກັບຄືນໄປ

**21** 3*ກ* ມຊຢ 12:2. *ຂ* ມຊຢ 12:5. 9*ກ* ມຊຢ 12:4.

ອີກເປັນເທື່ອທີສາມ, ແລະ ຖືກທໍລະມານ
ເໝືອນດັ່ງຄັ້ງກ່ອນ; ແລະ ຜູ້ທີ່ບໍ່ໄດ້ຖືກຂ້າ
ກໍກັບຄືນມາຫາເມືອງນີໄຟ.

13 ແລະ ພວກ ເຂົາ ໄດ້ຖ່ອມຕົວລົງຈົນ
ເຖິງພື້ນດິນ, ຍອມຕົວແບກຫາບແອກແຫ່ງ
ຄວາມເປັນທາດ, ແລະ ຍອມຕົວໃຫ້ຖືກ
ຂ້ຽນຕີ, ແລະ ຂັບໄລ່ໄປມາ ແລະ ບັນທຸກ
ຂອງໜັກຕາມຄວາມປາດຖະໜາຂອງສັດ
ຕູຂອງພວກເຂົາ.

14 ແລະ ພວກເຂົາໄດ້ [ກ]ຖ່ອມຕົວລົງຈົນ
ເຖິງສ່ວນເລິກແຫ່ງຄວາມຖ່ອມຕົວ; ແລະ
ພວກເຂົາໄດ້ຮ້ອງທຸກຢ່າງສຸດກຳລັງຕໍ່ພຣະ
ເຈົ້າ; ແທ້ຈິງແລ້ວ, ພວກເຂົາໄດ້ຮ້ອງທຸກຕໍ່
ພຣະເຈົ້າຂອງພວກເຂົາຕະຫລອດທັງວັນ
ເພື່ອຂໍໃຫ້ພຣະອົງປົດປ່ອຍພວກເຂົາອອກ
ຈາກຄວາມທຸກຂອງພວກເຂົາ.

15 ແລະ ບັດນີ້ພຣະຜູ້ເປັນເຈົ້າໄດ້ [ກ]ລ້າ
ຊ້າທີ່ຈະໄດ້ຍິນສຽງຮ້ອງທຸກຂອງພວກເຂົາ
ຍ້ອນວ່າຄວາມຊົ່ວຮ້າຍຂອງພວກເຂົາ;
ເຖິງຢ່າງໃດກໍຕາມ ພຣະຜູ້ເປັນເຈົ້າຍັງໄດ້
ຍິນສຽງຮ້ອງທຸກຂອງພວກເຂົາ, ແລະ ໄດ້
ເລີ່ມເຮັດໃຫ້ໃຈຂອງຊາວເລມັນອ່ອນລົງ
ຈົນໄດ້ເລີ່ມຫລຸດຜ່ອນພາລະແບກຫາບ
ຂອງພວກເຂົາ; ແຕ່ພຣະຜູ້ເປັນເຈົ້າຍັງບໍ່
ເຫັນສົມຄວນທີ່ຈະປົດປ່ອຍພວກເຂົາອອກ
ຈາກຄວາມເປັນທາດນັ້ນ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາເລີ່ມຈະເລີນຮຸ່ງເຮືອງຂຶ້ນເປັນລະ
ດັບຢູ່ໃນແຜ່ນດິນ ແລະ ເລີ່ມປູກພືດພັນ
ຂຶ້ນ, ແລະ ລ້ຽງຝູງສັດ, ແລະ ຝູງສັດທີ່ໃຊ້
ແຮງງານ, ເພື່ອພວກເຂົາຈະບໍ່ໄດ້ເປັນທຸກ
ທໍລະມານ ເພາະຄວາມອຶດຫິວຕໍ່ໄປ.

17 ບັດ ນີ້ມີຜູ້ຍິງເປັນ ຈຳນວນ ຫລວງ
ຫລາຍ, ຫລາຍກວ່າຈຳນວນຂອງຜູ້ຊາຍ;
ສະນັ້ນ ກະສັດລິມໄຮຈຶ່ງສັ່ງໃຫ້ຜູ້ຊາຍ
ທຸກຄົນ [ກ]ໃຫ້ອາຫານ ເພື່ອຊ່ວຍ ເຫລືອ
[ຂ]ແມ່ໝ້າຍ ແລະ ລູກໆຂອງພວກນາງ
ເພື່ອພວກເຂົາຈະບໍ່ຕາຍເພາະຄວາມອຶດ
ຫິວ; ແລະ ການນີ້ພວກເຂົາເຮັດໄປເພາະ
ຈຳນວນຄົນທີ່ຖືກຂ້າຕາຍນັ້ນຫລວງຫລາຍ.

18 ບັດນີ້ຜູ້ຄົນຂອງລິມໄຮໄດ້ເຕົ້າໂຮມ
ກັນເປັນກຸ່ມໃຫຍ່ເທົ່າທີ່ຈະເຮັດໄດ້, ແລະ
ໄດ້ໃຫ້ຄວາມປອດໄພແກ່ເຄື່ອງປູກຂອງຝັງ
ແລະ ສັດລ້ຽງຂອງຕົນ;

19 ແລະ ກະສັດເອງກໍບໍ່ໄວ້ໃຈຜູ້ຄົນຂອງ
ເພິ່ນ ເວລາເພິ່ນຢູ່ນອກກຳແພງເມືອງ,
ນອກຈາກວ່າຈະເອົາທະຫານອາລັກຂາ
ຂອງເພິ່ນໄປນຳ, ເພາະຢ້ານວ່າ ບໍ່ທາງໃດ
ກໍທາງໜຶ່ງ ເພິ່ນອາດຈະຕົກຢູ່ໃນກຳມືຂອງ
ຊາວເລມັນ.

20 ແລະ ເພິ່ນໄດ້ໃຫ້ຜູ້ຄົນຂອງເພິ່ນເຝົ້າ
ຍາມທົ່ວແຜ່ນດິນ, ເພາະວ່າບໍ່ທາງໃດກໍ
ທາງໜຶ່ງ ພວກເຂົາອາດຈະຈັບພວກປະໂລ
ຫິດໄດ້ ຜູ້ທີ່ປົບໜີເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ, ຊຶ່ງເປັນຜູ້ທີ່ລັກເອົາ [ກ]ພວກລູກ
ສາວຂອງຊາວເລມັນໄປ, ແລະ ກໍ່ໃຫ້ເກີດ
ຄວາມພິນາດຢ່າງໃຫຍ່ຫລວງແບບນີ້ກັບ
ພວກເຂົາ.

21 ເພາະວ່າພວກເຂົາປາດຖະໜາຈະ
ເອົາພວກນັ້ນມາລົງໂທດ; ເພາະພວກເຂົາ
ໄດ້ລັກເຂົ້າມາໃນແຜ່ນດິນນີໄຟຕອນກາງ
ຄືນ, ແລະ ລັກເອົາພືດພັນ ແລະ ສິ່ງທີ່ມີຄ່າ
ຫລາຍຢ່າງໄປ; ສະນັ້ນ ພວກເຂົາຈຶ່ງດັກຖ້າ
ພວກນັ້ນຢູ່.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ບໍ່ມີການກໍ່ກວນເກີດຂຶ້ນລະຫວ່າງຊາວ

14 *ກ* ມຊຢ 29:20.
ຄມພ ຖ່ອມຕົນ,
ຄວາມຖ່ອມຕົນ.

15 *ກ* ສພສ 15:29;
ມຊຢ 11:23–25;
ຄພ 101:7–9.

17 *ກ* ມຊຢ 4:16, 26.
*ຂ* ຄມພ ແມ່ໝ້າຍ.

20 *ກ* ມຊຢ 20:5.

ເລມັນກັບຜູ້ຄົນຂອງລິມໄຮອີກຕໍ່ໄປ, ຈົນ
ເຖິງເວລາທີ່ ກອຳໂມນກັບພີ່ນ້ອງຂອງລາວ
ເຂົ້າມາໃນແຜ່ນດິນນັ້ນ.
23 ແລະ ເວລາທີ່ກະສັດໄດ້ອອກໄປ
ນອກປະຕູເມືອງກັບທະຫານອາລັກຂາ
ຂອງເພິ່ນ, ເພິ່ນໄດ້ເຫັນອຳໂມນກັບພີ່ນ້ອງ
ຂອງລາວ; ແລະ ໂດຍຄິດວ່າພວກນີ້ເປັນ
ພວກປະໂລຫິດຂອງໂນອາ ສະນັ້ນ ເພິ່ນ
ຈຶ່ງໄດ້ສັ່ງໃຫ້ຈັບ, ແລະ ມັດໄວ້, ແລະ ເອົາ
ໄປ ກເຂົ້າຄຸກ. ແລະ ຖ້າຫາກພວກເຂົາເປັນ
ພວກປະໂລຫິດຂອງໂນອາແລ້ວ ເພິ່ນຈະ
ສັ່ງໃຫ້ປະຫານຊີວິດທັນທີ.
24 ແຕ່ເມື່ອເພິ່ນຮູ້ວ່າ ພວກເຂົາບໍ່ແມ່ນ
ພວກປະໂລຫິດ, ແຕ່ເປັນພີ່ນ້ອງຂອງເພິ່ນ
ເອງ, ແລະ ມາຈາກແຜ່ນດິນເຊຣາເຮັມລາ,
ເພິ່ນຈຶ່ງເຕັມໄປດ້ວຍຄວາມຊື່ນຊົມຢ່າງລົ້ນ
ເຫລືອ.
25 ບັດນີ້ ກ່ອນການມາຂອງອຳໂມນ
ນັ້ນ ກະສັດລິມໄຮໄດ້ເຄີຍສົ່ງຄົນຈຳນວນ
ກໜ້ອຍໜຶ່ງໄປ ຂຊອກຫາແຜ່ນດິນເຊຣາ
ເຮັມລາ; ແຕ່ພວກເຂົາຫາບໍ່ເຫັນ, ແລະ
ພວກເຂົາໄດ້ຫລົງທາງຢູ່ໃນຖິ່ນແຫ້ງແລ້ງ
ກັນດານ.
26 ເຖິງຢ່າງໃດກໍຕາມ, ພວກເຂົາໄດ້ພົບ
ເຫັນແຜ່ນດິນແຫ່ງໜຶ່ງ ຊຶ່ງເຄີຍມີຜູ້ຄົນອາ
ໄສຢູ່; ແທ້ຈິງແລ້ວ, ຊຶ່ງເປັນແຜ່ນດິນທີ່ເຕັມ
ໄປດ້ວຍ ກກະດູກແຫ້ງ; ແທ້ຈິງແລ້ວ, ເປັນ
ແຜ່ນດິນຊຶ່ງເຄີຍມີຜູ້ຄົນອາໄສຢູ່ ແລະ ຖືກ
ທຳລາຍໄປແລ້ວ; ແລະ ໂດຍທີ່ຄິດວ່າແມ່ນ
ແຜ່ນດິນເຊຣາເຮັມລາ, ຈຶ່ງໄດ້ກັບຄືນມາ
ຫາແຜ່ນດິນນີໄຟ, ຊຶ່ງມາຮອດຊາຍແດນບໍ່
ເທົ່າໃດມື້ ກ່ອນການມາຂອງອຳໂມນ.
27 ແລະ ພວກເຂົາໄດ້ນຳເອົາບັນທຶກ
ເຫລັ້ມໜຶ່ງມານຳ, ຊຶ່ງເປັນບັນທຶກຂອງຜູ້
ຄົນທີ່ຍັງເຫລືອແຕ່ຊາກກະດູກ; ຊຶ່ງມັນບັນ
ທຶກໄວ້ຢູ່ໃນແຜ່ນຈາລຶກທີ່ເປັນໂລຫະ.
28 ແລະບັດນີ້ລິມໄຮເຕັມໄປດ້ວຍຄວາມ
ຊື່ນຊົມເມື່ອຮູ້ຈາກປາກຂອງອຳໂມນວ່າ
ກະສັດໂມໄຊຢາມີ ກຂອງປະທານຈາກ
ພຣະເຈົ້າທີ່ສາມາດແປຄວາມໝາຍຕົວອັກ
ສອນນັ້ນໄດ້; ແທ້ຈິງແລ້ວ, ແລະ ອຳໂມນກໍ
ປິຕິຍິນດີເໝືອນກັນ.
29 ເຖິງຢ່າງໃດກໍຕາມ ອຳໂມນກັບພີ່
ນ້ອງຂອງລາວຍັງເຕັມໄປດ້ວຍຄວາມເສົ້າ
ສະຫລົດໃຈ ເພາະວ່າພີ່ນ້ອງຂອງລາວຢ່າງ
ຫລວງຫລາຍໄດ້ຖືກຂ້າຕາຍ;
30 ແລະ ວ່າກະສັດໂນອາ ແລະ ພວກ
ປະໂລຫິດໄດ້ເຮັດໃຫ້ຜູ້ຄົນເຮັດບາບ ແລະ
ຄວາມຊົ່ວຮ້າຍຫລາຍຢ່າງຕໍ່ພຣະເຈົ້າ;
ແລະ ພວກເຂົາໄດ້ເປັນທຸກເພາະ ກຄວາມ
ຕາຍຂອງອະບີນາໄດນຳອີກ; ແລະ ເປັນ
ທຸກຍ້ອນ ຂການຈາກໄປຂອງແອວມາ ແລະ
ຜູ້ຄົນທີ່ໄປກັບເພິ່ນ, ຜູ້ຊຶ່ງຈັດຕັ້ງສາດສະ
ໜາຈັກຂອງພຣະເຈົ້າຂຶ້ນໂດຍພະລັງ ແລະ
ອຳນາດຂອງພຣະເຈົ້າ, ແລະ ເຊື່ອຖືໃນຄຳ
ເວົ້າທີ່ອະບີນາໄດກ່າວໄວ້.
31 ແທ້ຈິງແລ້ວ, ພວກເຂົາໄດ້ເປັນທຸກ
ເພາະການຈາກໄປຂອງຄົນພວກນັ້ນ,
ເພາະບໍ່ຮູ້ຈັກວ່າ ພວກນັ້ນໜີໄປບ່ອນໃດ.
ບັດນີ້ພວກເຂົາມີຄວາມຊື່ນຊົມທີ່ໄດ້ເຂົ້າ
ຮ່ວມກັບພວກເຂົາ, ເພາະວ່າພວກເຂົາໄດ້
ເຂົ້າເຮັດພັນທະສັນຍາກັບພຣະເຈົ້າເພື່ອ
ຮັບໃຊ້ພຣະອົງ ແລະ ຮັກສາພຣະບັນຍັດ
ຂອງພຣະອົງ.
32 ແລະ ບັດນີ້ນັບຕັ້ງແຕ່ການມາຂອງ
ອຳໂມນ, ກະສັດລິມໄຮກໍໄດ້ເຂົ້າເຮັດ

22 ກ ມຊຢ 7:6–13.
23 ກ ຣລມ 5:21.
25 ກ ມຊຢ 8:7.
ຂ ມຊຢ 7:14.
26 ກ ມຊຢ 8:8.
28 ກ ອມນ 1:20–22;
ມຊຢ 28:11–16.
30 ກ ມຊຢ 17:12–20.
ຂ ມຊຢ 18:34–35.

ພັນທະສັນຍາກັບພຣະເຈົ້ານຳອີກ, ພ້ອມ
ທັງຜູ້ຄົນຂອງເພິ່ນຢ່າງຫລວງຫລາຍ, ເພື່ອ
ຮັບໃຊ້ພຣະອົງ ແລະ ຮັກສາພຣະບັນຍັດ
ຂອງພຣະອົງ.
33 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ
ຄື ກະສັດ ລິມໄຮກັບຜູ້ຄົນຂອງເພິ່ນ ເປັນ
ຈຳນວນຫລວງຫລາຍ ປາດ ຖະໜາທີ່ຈະ
ຮັບບັບຕິສະມາ; ແຕ່ວ່າບໍ່ມີຜູ້ໃດໃນແຜ່ນ
ດິນມີ [ກ]ສິດອຳນາດຈາກພຣະເຈົ້າ. ແລະ
ອຳໂມນກໍປະຕິເສດບໍ່ເຮັດສິ່ງນີ້, ໂດຍຖືວ່າ
ຕົນເອງເປັນຜູ້ຮັບໃຊ້ທີ່ບໍ່ສົມຄວນ.
34 ສະນັ້ນ ພວກເຂົາຈຶ່ງບໍ່ໄດ້ຈັດຕັ້ງຕົວ
ເອງໃຫ້ເປັນສາດສະໜາຈັກ, ໂດຍລໍຖ້າ
ພຣະວິນຍານຂອງພຣະຜູ້ເປັນເຈົ້າຢູ່. ບັດນີ້
ພວກເຂົາປາດຖະໜາຈະກາຍເປັນເໝືອນ
ດັ່ງແອວມາກັບພີ່ນ້ອງຂອງເພິ່ນ, ຊຶ່ງໄດ້ໜີ
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.
35 ພວກເຂົາປາດຖະໜາທີ່ຈະຮັບບັບຕິ
ສະມາເພື່ອເປັນພະຍານ ແລະ ປະຈັກ
ພະຍານວ່າ ພວກເຂົາເຕັມໃຈທີ່ຈະຮັບໃຊ້
ພຣະເຈົ້າດ້ວຍສຸດໃຈຂອງພວກເຂົາ; ເຖິງ
ຢ່າງໃດກໍຕາມ ພວກເຂົາໄດ້ລໍຖ້າເວລານັ້ນ;
ແລະ ເລື່ອງລາວກ່ຽວກັບການບັບຕິສະມາ
ຂອງພວກເຂົາ ຈະ [ກ]ໃຫ້ໄວ້ໃນພາຍຫລັງ.
36 ແລະ ບັດນີ້ຄວາມພະຍາຍາມທັງ
ໝົດຂອງອຳໂມນກັບຜູ້ຄົນຂອງລາວ, ແລະ
ກະສັດລິມໄຮກັບຜູ້ຄົນຂອງເພິ່ນຄື ເພື່ອປົດ
ປ່ອຍຕົນເອງໃຫ້ພົ້ນຈາກກຳມືຂອງຊາວ
ເລມັນ ແລະ ອອກຈາກການເປັນທາດ.

## ບົດທີ 22

*ມີການວາງແຜນເພື່ອຜູ້ຄົນຈະໄດ້ປົບໜີ
ຈາກການເປັນທາດຂອງຊາວເລມັນ—
ຊາວເລມັນຖືກເກືອເຫລົ້າຈົນມຶນເມົາ—
ຜູ້ຄົນປົບໜີກັບຄືນໄປເຊຣາເຮັມລາ ແລະ
ກາຍເປັນຜູ້ຄົນຂອງກະສັດໂມໄຊຢາ. ປະ
ມານ 121–120 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ອຳໂມນ ແລະ ກະສັດລິມໄຮເລີ່ມປຶກສາຫາ
ລືກັບຜູ້ຄົນວ່າ ຈະປົດປ່ອຍຕົນເອງອອກ
ຈາກການເປັນທາດໄດ້ແນວໃດ; ແລະ
ທັງສອງໄດ້ໃຫ້ຜູ້ຄົນທັງໝົດມາເຕົ້າໂຮມ
ກັນ; ແລະ ການນີ້ເຮັດໄປກໍເພື່ອຈະໄດ້ຟັງ
ຄວາມຄິດຄວາມເຫັນຂອງຜູ້ຄົນກ່ຽວກັບ
ເລື່ອງນີ້.
2 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາຫາຊ່ອງທາງປົດປ່ອຍຕົວເອງ
ອອກຈາກການເປັນທາດບໍ່ໄດ້ນອກຈາກ
ຈະພາພວກຜູ້ຍິງ ແລະ ເດັກນ້ອຍ, ທັງຝູງ
ແກະ, ແລະ ຝູງງົວຂອງພວກເຂົາ, ແລະ
ຜ້າເຕັ້ນທີ່ເປັນບ່ອນພັກພາອາໄສຂອງ
ພວກເຂົາໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນ
ດານ; ເພາະຊາວເລມັນມີຈຳນວນຫລວງ
ຫລາຍ, ຈຶ່ງເປັນໄປບໍ່ໄດ້ທີ່ຜູ້ຄົນຂອງ
ລິມໄຮຈະຕໍ່ສູ້ກັບພວກເຂົາ, ໂດຍຄິດຈະ
ປົດປ່ອຍຕົວເອງອອກຈາກຄວາມເປັນ
ທາດດ້ວຍດາບ.
3 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ກີເດໂອນໄດ້ອອກໄປຢືນຢູ່ຕໍ່ໜ້າກະສັດ
ແລະ ກ່າວວ່າ: ໂອ້ ຂ້າແດ່ເຈົ້າເໜືອຫົວ,
ທ່ານເຊື່ອຟັງຄຳເວົ້າຂອງຂ້ານ້ອຍມາ
ຫລາຍເທື່ອແລ້ວຈົນຮອດບັດນີ້ເວລາທີ່
ພວກເຮົາໄດ້ຕໍ່ສູ້ກັບຊາວເລມັນ, ພີ່ນ້ອງ
ຂອງພວກເຮົາ.
4 ແລະ ບັດນີ້ ໂອ້ ກະສັດເອີຍ ຖ້າຫາກ
ທ່ານບໍ່ເຫັນວ່າຂ້ານ້ອຍເປັນຜູ້ຮັບໃຊ້ທີ່ບໍ່

33 *ກ* ຄມພ ສິດອຳນາດ.
35 *ກ* ມຊຢ 25:17–18.

ມີປະໂຫຍດແລ້ວ, ຫລື ວ່າຈົນຮອດບັດ
ນີ້ທ່ານໄດ້ຟັງຄຳເວົ້າຂອງຂ້ານ້ອຍມາບໍ່
ຫລາຍກໍໜ້ອຍ, ແລະ ມັນເປັນປະໂຫຍດ
ແກ່ທ່ານ, ຈົນກະທັ້ງບັດນີ້ຂ້ານ້ອຍຢາກ
ໃຫ້ທ່ານຟັງຄຳເວົ້າຂອງຂ້ານ້ອຍໃນຄັ້ງນີ້,
ແລະ ຂ້ານ້ອຍຈະເປັນຜູ້ຮັບໃຊ້ຂອງທ່ານ
ແລະ ປົດປ່ອຍຜູ້ຄົນພວກນີ້ອອກຈາກ
ຄວາມເປັນທາດ.
5 ແລະ ກະສັດອະນຸຍາດໃຫ້ລາວເວົ້າ.
ແລະ ກີເດໂອນກ່າວວ່າ:
6 ຈົ່ງເບິ່ງ ທາງຜ່ານຂ້າງຫລັງ ຜ່ານກຳ
ແພງຂ້າງຫລັງຢູ່ທາງຂ້າງຫລັງຂອງເມືອງ.
ຊາວເລມັນ ແລະ ນາຍຍາມຂອງຊາວ
ເລມັນເມົາເຫລົ້າໃນຕອນກາງຄືນ; ສະນັ້ນ
ໃຫ້ພວກເຮົາອອກປະກາດໄປໃນບັນດາຜູ້
ຄົນພວກນີ້ທັງໝົດໃຫ້ພວກເຂົາຮວບຮວມ
ຝູງສັດລ້ຽງ ແລະ ຝູງສັດໃຊ້ແຮງງານຂອງ
ພວກເຂົາໄວ້ ເພື່ອຈະຕ້ອນມັນເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານໃນຕອນກາງຄືນ.
7 ແລະ ຂ້ານ້ອຍຈະໄປຕາມຄຳສັ່ງຂອງ
ທ່ານ ແລະ ມອບເຫລົ້າອະງຸ່ນໃຫ້ແກ່ຊາວ
ເລມັນເປັນເຄື່ອງຊ່ວຍເທື່ອສຸດທ້າຍ; ແລະ
ພວກເຂົາຈະມຶນເມົາ; ແລະ ພວກເຮົາຈະ
ຜ່ານໄປທາງລັບ ທາງເບື້ອງຊ້າຍຂອງຄ້າຍ
ພວກເຂົາເວລາພວກເຂົາເມົາເຫລົ້າ ແລະ
ນອນຫລັບຢູ່.
8 ພວກເຮົາຈະອອກໄປໃນຖິ່ນແຫ້ງແລ້ງ
ກັນດານພ້ອມດ້ວຍພວກຜູ້ຍິງຂອງພວກ
ເຮົາ ແລະ ເດັກນ້ອຍຂອງພວກເຮົາ, ທັງ
ຝູງແກະຂອງພວກເຮົາ, ແລະ ຝູງງົວຂອງ
ພວກເຮົາ, ແລະ ພວກເຮົາຈະເດີນທາງໄປ
ທາງຫລັງຂອງແຜ່ນດິນໄຊລຳ.
9 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ກະສັດໄດ້ເຊື່ອຟັງຄຳເວົ້າຂອງກີເດໂອນ.
10 ແລະ ກະສັດລິມໄຮໄດ້ໃຫ້ຜູ້ຄົນຂອງ
ເພິ່ນທ້ອນໂຮມຝູງສັດໄວ້; ແລະ ເພິ່ນໄດ້
ສົ່ງເຫລົ້າອະງຸ່ນເປັນເຄື່ອງຊ່ວຍໄປໃຫ້
ຊາວເລມັນ; ແລະ ເພິ່ນໄດ້ສົ່ງເຫລົ້າອະງຸ່ນ
ເພີ່ມໄປເພື່ອເປັນລາງວັນແກ່ພວກເຂົານຳ
ອີກ; ແລະ ພວກເຂົາໄດ້ກິນເຫລົ້າອະງຸ່ນທີ່
ກະສັດລິມໄຮສົ່ງໄປໃຫ້ຢ່າງບໍ່ຢຸດພັກ.
11 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຜູ້ຄົນຂອງກະສັດລິມໄຮໄດ້ເດີນທາງ
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານໃນເວລາ
ກາງຄືນພ້ອມທັງຝູງສັດລ້ຽງຂອງພວກເຂົາ
ແລະ ຝູງສັດໃຊ້ແຮງງານຂອງພວກເຂົາ,
ແລະ ພວກເຂົາໄດ້ອອກໄປທາງຫລັງຜ່ານ
ແຜ່ນດິນໄຊລຳເຂົ້າໄປໃນຖິ່ນແຫ້ງແລ້ງກັນ
ດານ, ແລະ ມຸ້ງໜ້າໄປສູ່ແຜ່ນດິນເຊຣາ
ເຮັມລາໂດຍມີອຳໂມນກັບພີ່ນ້ອງຂອງລາວ
ພາໄປ.
12 ແລະ ພວກເຂົາໄດ້ເອົາຄຳຂອງພວກ
ເຂົາ, ແລະ ເງິນ, ແລະ ສິ່ງທີ່ມີຄ່າທຸກຢ່າງ
ຂອງພວກເຂົາ, ເທົ່າທີ່ພວກເຂົາຈະເອົາໄປ
ໄດ້, ແລະ ສະບຽງອາຫານຂອງພວກເຂົາ
ໄປໃນຖິ່ນແຫ້ງແລ້ງກັນດານນຳພວກເຂົາ;
ແລະ ພວກເຂົາເດີນທາງຂອງພວກເຂົາຕໍ່
ໄປ.
13 ແລະ ຫລັງຈາກຢູ່ໃນຖິ່ນແຫ້ງແລ້ງ
ກັນດານເປັນເວລາຫລາຍມື້ ພວກເຂົາກໍ
ມາເຖິງແຜ່ນດິນເຊຣາເຮັມລາ, ແລະ ໄດ້
ເຂົ້າຮ່ວມກັບຜູ້ຄົນຂອງໂມໄຊຢາ, ແລະ
ໄດ້ກາຍເປັນຜູ້ຄົນຂອງເພິ່ນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໄຊຢາໄດ້ຕ້ອນຮັບພວກເຂົາດ້ວຍຄວາມ
ຊື່ນຊົມ; ແລະ ເພິ່ນກໍໄດ້ຮັບເອົາ [ກ]ບັນທຶກ
ຂອງພວກເຂົາໄວ້ນຳ, ພ້ອມທັງ [ຂ]ບັນທຶກ
ຊຶ່ງຜູ້ຄົນຂອງລິມໄຮໄດ້ພົບເຫັນໄວ້ນຳ.

**22** 14 *ກ* ມຊຢ 8:5. *ຂ* ມຊຢ 8:9.

15 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອຊາວເລມັນຮູ້ຈັກວ່າຜູ້ຄົນຂອງລິມໄຮ
ໄດ້ລັກໜີໄປຈາກແຜ່ນດິນໃນຕອນກາງ
ຄືນ, ພວກເຂົາຈຶ່ງໄດ້ສົ່ງກອງທັບຕິດຕາມ
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ;
16 ແລະ ຫລັງຈາກຕິດຕາມໄດ້ສອງມື້
ພວກເຂົາກໍນຳຮອຍພວກນັ້ນບໍ່ໄດ້ຕໍ່ໄປ;
ສະນັ້ນ ພວກເຂົາຈຶ່ງຫລົງທາງຢູ່ໃນຖິ່ນ
ແຫ້ງແລ້ງກັນດານ.

---

ເລື່ອງລາວຂອງແອວມາກັບຜູ້ຄົນຂອງ
ພຣະຜູ້ເປັນເຈົ້າ, ຜູ້ຖືກຜູ້ຄົນຂອງກະສັດ
ໂນອາຂັບໄລ່ເຂົ້າໄປໃນຖິ່ນແຫ້ງແລ້ງກັນ
ດານ.

*ມີຢູ່ໃນບົດທີ 23 ແລະ 24.*

## ບົດທີ 23

*ແອວມາປະຕິເສດບໍ່ຍອມເປັນກະສັດ—ເພິ່ນຮັບໃຊ້ໃນຖານະມະຫາປະໂລຫິດ—ພຣະຜູ້ເປັນເຈົ້າຕີສອນຜູ້ຄົນຂອງພຣະອົງ ແລະ ຊາວເລມັນຍຶດຄອງແຜ່ນດິນເຮລາມ—ອະມິວລອນ, ຫົວໜ້າປະໂລຫິດທີ່ຊົ່ວຂອງກະສັດໂນອາປົກຄອງແບບເປັນຫົວເມືອງຂຶ້ນຂອງກະສັດຂອງຊາວເລມັນ. ປະມານ 145–121 ປີ ກ່ອນ ຄ.ສ.*

1 ບັດນີ້ແອວມາໂດຍທີ່ພຣະຜູ້ເປັນເຈົ້າ
ໄດ້ເຕືອນວ່າ ກອງທັບຂອງກະສັດໂນອາ
ຈະຍົກທັບມາໂຈມຕີ, ແລະ ເປັນທີ່ຮູ້ຈັກແກ່
ຜູ້ຄົນຂອງເພິ່ນແລ້ວ, ສະນັ້ນ ພວກເຂົາຈຶ່ງ
ທ້ອນໂຮມຝູງສັດຂອງພວກເຂົາ ແລະ ພືດ
ພັນຂອງພວກເຂົາ, ແລະ ໄດ້ເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານກ່ອນກອງທັບຂອງ
ກະສັດໂນອາຈະມາເຖິງ.
2 ແລະ ພຣະຜູ້ເປັນເຈົ້າໄດ້ເພີ່ມກຳ
ລັງພວກເຂົາເພື່ອບໍ່ໃຫ້ຜູ້ຄົນຂອງກະສັດ
ໂນອາຕິດຕາມມາທັນ ເພື່ອທຳລາຍພວກ
ເຂົາ.
3 ແລະ ພວກເຂົາໄດ້ເດີນທາງເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານເປັນເວລາແປດມື້.
4 ແລະ ພວກເຂົາກໍມາຮອດແຜ່ນດິນ
ບ່ອນໜຶ່ງ, ແທ້ຈິງແລ້ວ, ເປັນແຜ່ນດິນທີ່
ສວຍສົດງົດງາມ ແລະ ໜ້າຢູ່, ແລະ ເປັນ
ແຜ່ນດິນທີ່ມີນ້ຳບໍລິສຸດ.
5 ແລະ ພວກເຂົາໄດ້ຕັ້ງຜ້າເຕັ້ນຂອງ
ພວກເຂົາຂຶ້ນ, ແລະ ເລີ່ມໄຖດິນ ແລະ ສ້າງ
ອາຄານບ້ານເຮືອນຂຶ້ນ; ແທ້ຈິງແລ້ວ, ພວກ
ເຂົາເປັນຄົນດຸໝັ່ນ ແລະ ເຮັດວຽກຢ່າງຂະ
ຫຍັນຂັນແຂງ.
6 ແລະ ຜູ້ຄົນປາດຖະໜາໃຫ້ແອວມາ
ເປັນກະສັດຂອງພວກເຂົາ, ເພາະວ່າເພິ່ນ
ເປັນທີ່ຮັກຫອມຂອງຜູ້ຄົນຂອງເພິ່ນ.
7 ແຕ່ເພິ່ນໄດ້ກ່າວກັບພວກເຂົາວ່າ: ຈົ່ງ
ເບິ່ງ, ມັນບໍ່ສົມຄວນເລີຍທີ່ພວກເຮົາຈະ
ມີກະສັດ; ເພາະວ່າພຣະເຈົ້າໄດ້ກ່າວດັ່ງ
ນີ້: ເຈົ້າຈະ [a]ບໍ່ຕ້ອງນັບຖືເນື້ອໜັງອັນໃດທີ່
ສູງກວ່າເນື້ອໜັງອີກອັນໜຶ່ງ, ຫລື ວ່າຄົນຜູ້
ໜຶ່ງຈະບໍ່ຄິດວ່າຕົນເອງສູງກວ່າອີກຜູ້ໜຶ່ງ;
ສະນັ້ນ ຂ້າພະເຈົ້າຈຶ່ງກ່າວວ່າ ມັນບໍ່ສົມ
ຄວນເລີຍທີ່ພວກເຮົາຈະມີກະສັດ.
8 ເຖິງຢ່າງໃດກໍຕາມ, ຖ້າຫາກເປັນໄປ
ໄດ້ວ່າ ມີຄົນທ່ຽງທຳຜູ້ທີ່ຈະມາເປັນກະສັດ
ຂອງພວກທ່ານແລ້ວ ກໍເປັນການດີທີ່ສຸດ
ສຳລັບພວກທ່ານທີ່ຈະມີກະສັດ.
9 ແຕ່ ຈົ່ງ ຈື່ ຈຳ [a]ຄວາມຊົ່ວຮ້າຍຂອງ
ກະສັດໂນອາ ແລະ ພວກປະໂລຫິດຂອງ

**23** 7 *a* ມຊຢ 27:3–5.
9 *a* ສພສ 16:12; ມຊຢ 11:1–15.

ເພິ່ນ; ແລະ ຕົວຂ້າພະເຈົ້າເອງກໍຍັງ [ຂ]ຖືກ
ບ້ວງມາແລ້ວ, ແລະ ໄດ້ ເຮັດ ຫລາຍ ສິ່ງ
ຫລາຍຢ່າງທີ່ໜ້າກຽດ ຊັງ ໃນສາຍ ພຣະ
ເນດຂອງພຣະຜູ້ເປັນເຈົ້າ, ຊຶ່ງເຮັດໃຫ້ຂ້າ
ພະເຈົ້າມີການກັບໃຈຢ່າງເຈັບຊ້ຳ;
10 ເຖິງ ຢ່າງໃດ ກໍ ຕາມ, ຫລັງຈາກມີ
[ກ]ຄວາມທຸກຍາກລຳບາກມາຫລາຍແລ້ວ,
ພຣະຜູ້ເປັນເຈົ້າຍັງໄດ້ຍິນສຽງຮ້ອງຂອງຂ້າ
ພະເຈົ້າ, ແລະ ໄດ້ຕອບຄຳອະທິຖານຂອງ
ຂ້າພະເຈົ້າ ແລະ ເຮັດໃຫ້ຂ້າພະເຈົ້າເປັນ
ເຄື່ອງມືໃຫ້ແກ່ພຣະອົງໃນການເຮັດໃຫ້
ພວກທ່ານ [ຂ]ຫລາຍຄົນມາຮູ້ຈັກຄວາມຈິງ
ຂອງພຣະອົງ.
11 ເຖິງຢ່າງໃດກໍຕາມ, ໃນເລື່ອງນີ້ຂ້າ
ພະເຈົ້າບໍ່ໄດ້ອວດອ້າງ, ເພາະວ່າຂ້າພະ
ເຈົ້າບໍ່ມີຄ່າຄວນທີ່ຈະອວດອ້າງຕົວເອງ.
12 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ຖ້າຫາກພວກທ່ານຖືກກະສັດ
ໂນອາກົດຂີ່ຂົ່ມເຫັງ, ແລະ ຢູ່ໃນຄວາມເປັນ
ທາດຂອງເພິ່ນ ແລະ ພວກປະໂລຫິດຂອງ
ເພິ່ນ, ແລະ ຖືກພວກເຂົານຳໄປຫາຄວາມ
ຊົ່ວຮ້າຍ; ສະນັ້ນ ພວກທ່ານຈຶ່ງຖືກມັດໄວ້
ດ້ວຍ [ກ]ພັນທະການແຫ່ງຄວາມຊົ່ວຮ້າຍ.
13 ແລະ ບັດນີ້ເມື່ອພວກທ່ານຖືກປົດ
ປ່ອຍຈາກພັນທະການເຫລົ່ານີ້ແລ້ວ; ໂດຍ
ອຳນາດຂອງພຣະເຈົ້າ; ແທ້ຈິງແລ້ວ, ແມ່ນ
ໃຫ້ພົ້ນຈາກກຳມືຂອງກະສັດໂນອາ ແລະ
ຜູ້ຄົນຂອງເພິ່ນ, ແລະ ຈາກພັນທະການ
ແຫ່ງຄວາມຊົ່ວຮ້າຍນຳອີກ, ດັ່ງນັ້ນຂ້າ
ພະເຈົ້າຈຶ່ງປາດຖະໜາທີ່ຈະໃຫ້ພວກທ່ານ
[ກ]ຍຶດໝັ້ນຢູ່ໃນຄວາມເປັນ [ຂ]ເສລີພາບນີ້,
ຊຶ່ງພວກທ່ານໄດ້ຖືກເຮັດໃຫ້ເປັນອິດສະ
ລະ, ແລະ ວ່າພວກທ່ານຈະບໍ່ໄວ້ວາງໃຈ
[ຄ]ຜູ້ໃດເພື່ອມາເປັນກະສັດປົກຄອງພວກ
ທ່ານ.
14 ແລະ ບໍ່ໃຫ້ໄວ້ວາງໃຈ [ກ]ຜູ້ສອນຜູ້ໃດ
ຫລື ຜູ້ປະຕິບັດສາດສະໜາກິດຜູ້ໃດຂອງ
ພວກທ່ານ, ຖ້າຫາກເຂົາບໍ່ໄດ້ເປັນຂອງ
ພຣະເຈົ້າ, ເດີນໄປຕາມທາງຂອງພຣະອົງ
ແລະ ຮັກສາພຣະບັນຍັດຂອງພຣະອົງ.
15 ແອວມາໄດ້ສິດສອນຜູ້ຄົນຂອງເພິ່ນ
ດັ່ງນີ້, ວ່າທຸກຄົນຄວນ [ກ]ຮັກແພງເພື່ອນ
ບ້ານຄືກັນກັບຮັກຕົນເອງ, ແລະ ບໍ່ຄວນມີ
[ຂ]ການຂັດແຍ້ງຢູ່ໃນບັນດາພວກເຂົາ.
16 ແລະ ບັດນີ້ແອວມາໄດ້ເປັນ [ກ]ມະຫາ
ປະໂລຫິດຂອງພວກເຂົາ, ເປັນຜູ້ສ້າງຕັ້ງ
ສາດສະໜາຈັກຂອງພວກເຂົາ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ບໍ່ມີ
ຜູ້ໃດໄດ້ຮັບ [ກ]ສິດອຳນາດໃຫ້ສັ່ງສອນ ຫລື
ສິດສອນເລີຍຖ້າບໍ່ໄດ້ຮັບອະນຸຍາດຈາກ
ເພິ່ນເສຍກ່ອນຊຶ່ງຈາກພຣະເຈົ້າ. ສະນັ້ນ
ເພິ່ນຈຶ່ງໄດ້ແຕ່ງຕັ້ງປະໂລຫິດ ແລະ ຜູ້ສອນ
ທັງໝົດຂອງເພິ່ນ ແຕ່ບໍ່ມີຄົນໃດໄດ້ຮັບ
ການແຕ່ງຕັ້ງຍົກເວັ້ນແຕ່ຈະເປັນຄົນຊອບ
ທຳເທົ່ານັ້ນ.
18 ສະນັ້ນ ພວກເຂົາຈຶ່ງໄດ້ດູແລຜູ້ຄົນ
ຂອງພວກເຂົາ, ແລະ ໄດ້ [ກ]ບຳລຸງລ້ຽງຜູ້ຄົນ
ເຫລົ່ານັ້ນໃນສິ່ງທີ່ຊອບທຳ.
19 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ພວກເຂົາເລີ່ມຈະເລີນຮຸ່ງເຮືອງຂຶ້ນຢ່າງຍິ່ງ
ໃນແຜ່ນດິນ; ແລະ ພວກເຂົາຕັ້ງຊື່ໃຫ້ແຜ່ນ
ດິນນັ້ນວ່າ ເຮລາມ.

9 ຂ ມຊຢ 17:1–4.
10 ກ ຄພ 58:4.
ຂ ມຊຢ 18:35.
12 ກ 2 ນຟ 28:19–22.
13 ກ ຄລຕ 5:1.
ຂ ຄມພ ເສລີພາບ.
ຄ ມຊຢ 29:13.
14 ກ ມຊຢ 18:18–22.
15 ກ ຄມພ ຮັກ, ຄວາມຮັກ.
ຂ 3 ນຟ 11:28–29.
16 ກ ມຊຢ 26:7.
17 ກ ຄມພ ສິດອຳນາດ;
ຖານະປະໂລຫິດ.
18 ກ 1 ຕມທ 4:6.

20 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ໄດ້ມີຜູ້ຄົນເພີ່ມທະວີຂຶ້ນເລື້ອຍໆ ແລະ ຈະ
ເລີນຮຸ່ງເຮືອງຢ່າງຍິ່ງໃນແຜ່ນດິນເຮລາມ;
ແລະ ພວກເຂົາໄດ້ສ້າງເມືອງໜຶ່ງຂຶ້ນ, ຊຶ່ງ
ພວກເຂົາຕັ້ງຊື່ໃຫ້ມັນວ່າ ເມືອງເຮລາມ.
21 ເຖິງຢ່າງໃດກໍຕາມ ພຣະຜູ້ເປັນເຈົ້າ
ໄດ້ເຫັນສົມຄວນທີ່ຈະ [ກ]ຕີສອນຜູ້ຄົນຂອງ
ພຣະອົງ; ແທ້ຈິງແລ້ວ, ພຣະອົງໄດ້ທົດລອງ
[ຂ]ຄວາມອົດທົນ ແລະ ສັດທາຂອງພວກ
ເຂົາ.
22 ເຖິງຢ່າງໃດກໍຕາມ—ຜູ້ໃດກໍຕາມທີ່
[ກ]ໄວ້ວາງໃຈໃນພຣະອົງ ຜູ້ນັ້ນຈະຖືກ [ຂ]ຍົກ
ຂຶ້ນໃນວັນສຸດທ້າຍ. ແທ້ຈິງແລ້ວ, ມັນຈະ
ເປັນໄປແນວນັ້ນກັບຜູ້ຄົນພວກນີ້.
23 ເພາະຈົ່ງເບິ່ງ, ຂ້າພະເຈົ້າຈະສະແດງ
ຕໍ່ພວກທ່ານວ່າ ຜູ້ຄົນຖືກເອົາໄປເປັນທາດ,
ແລະ ບໍ່ມີຜູ້ໃດຈະປົດປ່ອຍພວກເຂົາໄດ້
ນອກຈາກພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ, ແທ້ຈິງແລ້ວ, ແມ່ນ
ພຣະເຈົ້າຂອງອັບຣາຮາມ ແລະ ອີຊາກ
ແລະ ຂອງຢາໂຄບ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະອົງໄດ້ປົດປ່ອຍພວກເຂົາ, ແລະ ພຣະ
ອົງໄດ້ສະແດງອຳນາດອັນຍິ່ງໃຫຍ່ຂອງ
ພຣະອົງຕໍ່ພວກເຂົາ, ແລະ ພວກເຂົາມີ
ຄວາມຊື່ນຊົມຢ່າງໃຫຍ່ຫລວງ.
25 ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດ
ຂຶ້ນຄື ເວລາທີ່ພວກເຂົາຢູ່ໃນແຜ່ນດິນເຮ
ລາມ, ແທ້ຈິງແລ້ວ, ຢູ່ໃນເມືອງເຮລາມ,
ເວລາທີ່ຜູ້ຄົນກຳລັງໄຖດິນຢູ່ນັ້ນ, ຈົ່ງເບິ່ງ
ກອງທັບຂອງຊາວເລມັນໄດ້ມາຕັ້ງຢູ່ທີ່ຊາຍ
ແດນຂອງແຜ່ນດິນນັ້ນ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ພີ່
ນ້ອງຂອງແອວມາໄດ້ແລ່ນໜີຈາກໄຮ່ນາ
ຂອງພວກເຂົາ, ແລະ ໄດ້ໄປເຕົ້າໂຮມກັນ
ຢູ່ໃນເມືອງເຮລາມ; ແລະ ພວກເຂົາຕົກໃຈ
ຫລາຍເພາະຢ້ານກົວໃນທ່າທີຂອງຊາວ
ເລມັນ.
27 ແຕ່ແອວມາໄດ້ອອກມາຢືນຢູ່ໃນບັນ
ດາພວກເຂົາ ແລະ ຊັກຊວນບໍ່ໃຫ້ພວກ
ເຂົາຕົກໃຈ, ແຕ່ໃຫ້ລະນຶກເຖິງພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງພວກເຂົາ ແລະ
ພຣະອົງຈະປົດປ່ອຍພວກເຂົາ.
28 ສະນັ້ນ ພວກເຂົາຈຶ່ງເຊົາຢ້ານ ແລະ
ເລີ່ມຮ້ອງທູນຕໍ່ພຣະຜູ້ເປັນເຈົ້າໃຫ້ພຣະອົງ
ຊ່ວຍເຮັດໃຫ້ໃຈຂອງຊາວເລມັນອ່ອນລົງ,
ເພື່ອໃຫ້ພວກເຂົາໄວ້ຊີວິດຂອງພວກເຂົາ,
ແລະ ເມຍຂອງພວກເຂົາ, ແລະ ລູກຂອງ
ພວກເຂົາ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ໃຈຂອງຊາວ
ເລມັນອ່ອນລົງ. ແລະ ແອວມາກັບພີ່ນ້ອງ
ຂອງເພິ່ນໄດ້ອອກໄປມອບຕົວໃຫ້ຢູ່ໃນມື
ຂອງພວກເຂົາ; ແລະ ຊາວເລມັນໄດ້ເຂົ້າ
ມາເປັນເຈົ້າຂອງແຜ່ນດິນເຮລາມ.
30 ບັດນີ້ກອງທັບຂອງຊາວເລມັນ ຊຶ່ງໄລ່
ຕາມຜູ້ຄົນຂອງກະສັດລິມໄຮມາ ໄດ້ຫລົງ
ທາງຢູ່ໃນຖິ່ນແຫ້ງແລ້ງກັນດານຫລາຍມື້.
31 ແລະ ຈົ່ງເບິ່ງ, ພວກເຂົາໄດ້ພົບພໍ້
ພວກປະໂລຫິດຂອງກະສັດໂນອາຢູ່ໃນ
ບ່ອນໜຶ່ງ, ຊຶ່ງພວກເຂົາເອີ້ນວ່າ ອະມິວ
ລອນ; ແລະ ພວກເຂົາເລີ່ມຕົ້ນເປັນເຈົ້າ
ຂອງແຜ່ນດິນອະມິວລອນ ແລະ ເລີ່ມໄຖ
ດິນ.
32 ບັດນີ້ ຊື່ຂອງຜູ້ນຳຂອງພວກປະໂລ
ຫິດເຫລົ່ານັ້ນຄື ອະມິວລອນ.

---

21 *ກ* ຣລມ 12:3;
ຄພ 98:21.
ຄມພ ຕີສອນ, ການຕີສອນ.
*ຂ* ຄມພ ອົດທົນ,
ຄວາມອົດທົນ.
22 *ກ* ຄມພ ໄວ້ວາງໃຈ,
ຄວາມໄວ້ວາງໃຈ.
*ຂ* 1 ນຟ 13:37.

33 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະມິວລອນ ໄດ້ ວິງວອນ ຊາວ ເລມັນ; ແລະ ພວກເຂົາ ໄດ້ ສົ່ງເມຍຂອງພວກເຂົາ, ຊຶ່ງເປັນ [ກ]ພວກລູກສາວຂອງຊາວເລມັນໄປ, ເພື່ອອ້ອນວອນພີ່ນ້ອງຂອງພວກເຂົາ, ເພື່ອບໍ່ໃຫ້ທຳລາຍຜົວຂອງພວກນາງ.

34 ແລະ ຊາວເລມັນມີ [ກ]ຄວາມເມດຕາສົງສານຕໍ່ອະມິວລອນ ແລະ ພີ່ນ້ອງຂອງລາວ, ແລະ ບໍ່ໄດ້ທຳລາຍພວກເຂົາຍ້ອນຄຳອ້ອນວອນຂອງພວກເມຍຂອງພວກເຂົາ.

35 ແລະ ອະມິວລອນ ແລະ ພີ່ນ້ອງຂອງລາວ ໄດ້ ເຂົ້າຮ່ວມກັບ ຊາວ ເລມັນ, ແລະ ເວລາທີ່ຄົນພວກນັ້ນກຳລັງເດີນທາງຢູ່ໃນຖິ່ນ ແຫ້ງແລ້ງກັນດານຊອກຫາແຜ່ນດິນນີໄຟຢູ່ນັ້ນ ພວກເຂົາໄດ້ພົບເຫັນແຜ່ນດິນເຮລາມ, ຊຶ່ງແອວມາກັບພີ່ນ້ອງຂອງເພິ່ນເປັນເຈົ້າຂອງ.

36 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ສັນຍາກັບແອວມາ ແລະ ພີ່ນ້ອງຂອງເພິ່ນວ່າ ຖ້າຫາກພວກເຂົາບອກທາງໄປ ສູ່ ແຜ່ນ ດິນນີໄຟ ໃຫ້ພວກເຂົາ ແລ້ວພວກເຂົາຈະໄວ້ຊີວິດ ແລະ ປ່ອຍໃຫ້ພວກເຂົາມີເສລີພາບ.

37 ແຕ່ຫລັງຈາກແອວມາບອກທາງໄປຫາແຜ່ນດິນນີໄຟໃຫ້ພວກເຂົາແລ້ວ ຊາວເລມັນບໍ່ໄດ້ຮັກສາຄຳສັນຍານັ້ນເລີຍ; ແຕ່ພວກເຂົາໄດ້ຈັດຍາມໄວ້ທົ່ວແຜ່ນດິນເຮລາມ, ເພື່ອໃຫ້ [ກ]ເຝົ້າຍາມແອວມາກັບພີ່ນ້ອງຂອງເພິ່ນ.

38 ແລະ ພວກທີ່ເຫລືອຢູ່ກໍໄປຫາແຜ່ນດິນນີໄຟ; ແລະ ພາກສ່ວນໜຶ່ງໄດ້ກັບຄືນມາແຜ່ນດິນເຮລາມ, ແລະ ໄດ້ນຳເອົາລູກເມຍຂອງທະຫານຍາມຜູ້ທີ່ໄດ້ຖືກປະໄວ້ຢູ່ໃນແຜ່ນດິນນັ້ນມານຳ.

39 ແລະ ກະສັດຂອງຊາວເລມັນໄດ້ອະນຸຍາດໃຫ້ອະມິວລອນເປັນກະສັດເພື່ອປົກຄອງດູແລຜູ້ຄົນຂອງລາວ, ຜູ້ທີ່ຢູ່ໃນແຜ່ນດິນເຮລາມ; ເຖິງຢ່າງໃດກໍຕາມ ລາວກໍບໍ່ມີອຳນາດອັນໃດເລີຍທີ່ຈະເຮັດກົງກັນຂ້າມກັບຄວາມປາດຖະໜາຂອງກະສັດຂອງຊາວເລມັນໄດ້.

## ບົດທີ 24

*ອະມິວລອນຂົ່ມເຫັງແອວມາ ແລະ ຜູ້ຄົນຂອງເພິ່ນ—ພວກເຂົາຈະຖືກປະຫານຖ້າຫາກພວກເຂົາອະທິຖານ—ພຣະຜູ້ເປັນເຈົ້າເຮັດໃຫ້ພາລະແບກຫາບຂອງພວກເຂົາເບົາບາງລົງ—ພຣະອົງປົດປ່ອຍພວກເຂົາອອກຈາກການເປັນທາດ ແລະ ພວກເຂົາກັບຄືນໄປຫາເຊຣາເຮັມລາ. ປະມານ 145–120 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະມິວລອນໄດ້ເປັນທີ່ພໍໃຈໃນສາຍຕາຂອງກະສັດຂອງຊາວເລມັນ; ສະນັ້ນ ກະສັດຂອງຊາວເລມັນຈຶ່ງໄດ້ອະນຸຍາດໃຫ້ລາວກັບພີ່ນ້ອງຂອງລາວເປັນຜູ້ສິດສອນ ແລະ ເປັນຜູ້ດູແລຜູ້ຄົນຂອງລາວ, ແທ້ຈິງແລ້ວ, ດູແລຜູ້ຄົນທີ່ຢູ່ໃນແຜ່ນດິນເຊັມລອນ, ແລະ ຢູ່ໃນແຜ່ນດິນໄຊລຳ, ແລະ ໃນແຜ່ນດິນອະມິວລອນ.

2 ເພາະວ່າຊາວເລມັນໄດ້ເຂົ້າເປັນເຈົ້າຂອງແຜ່ນດິນທັງໝົດ; ສະນັ້ນ, ກະສັດຂອງຊາວເລມັນຈຶ່ງແຕ່ງຕັ້ງກະສັດໄວ້ເພື່ອປົກຄອງແຜ່ນດິນເຫລົ່ານັ້ນທັງໝົດ.

3 ແລະ ບັດນີ້ຊື່ກະສັດຂອງຊາວເລມັນຄື ເລມັນ, ໂດຍເອີ້ນຕາມຊື່ບິດາຂອງເພິ່ນ;

33 *ກ* ມຊຍ 20:3–5.
34 *ກ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.
37 *ກ* ມຊຍ 24:8–15.

ແລະ ສະນັ້ນ ເພິ່ນຈຶ່ງຖືກເອີ້ນວ່າ ກະສັດ
ເລມັນ. ແລະ ເພິ່ນໄດ້ເປັນກະສັດປົກຄອງ
ຜູ້ອົບຍົບຢ່າງຫລວງຫລາຍ.
4 ແລະ ເພິ່ນໄດ້ແຕ່ງຕັ້ງພີ່ນ້ອງຂອງອະ
ມິວລອນໃຫ້ເປັນຜູ້ສອນໃນແຜ່ນດິນທຸກ
ບ່ອນທີ່ຜູ້ຄົນຂອງເພິ່ນເປັນເຈົ້າຂອງ; ແລະ
ພາສາຂອງນີໄຟຈຶ່ງເລີ່ມຖືກສິດສອນໃນ
ບັນດາຜູ້ຄົນທັງໝົດຂອງຊາວເລມັນ.
5 ແລະ ພວກເຂົາເປັນມິດທີ່ດີຕໍ່ກັນ;
ເຖິງຢ່າງໃດກໍຕາມ, ພວກເຂົາກໍຍັງບໍ່ຮູ້
ຈັກພຣະເຈົ້າ; ພີ່ນ້ອງຂອງອະມິວລອນກໍ
ບໍ່ໄດ້ສິດສອນຫຍັງເລີຍໃຫ້ແກ່ພວກເຂົາ
ກ່ຽວກັບພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ, ທັງບໍ່ໄດ້ສິດສອນກົດຂອງ
ໂມເຊ; ຫລື ບໍ່ໄດ້ສິດສອນຄຳເວົ້າຂອງອະ
ບີນາໄດແກ່ພວກເຂົາເລີຍ;
6 ແຕ່ພວກເຂົາສິດສອນພວກເຂົາວ່າ
ພວກເຂົາຄວນຮັກສາບັນທຶກຂອງພວກ
ເຂົາ, ແລະ ໃຫ້ພວກເຂົາຂຽນຈົດໝາຍຫາ
ກັນ.
7 ແລະ ຊາວເລມັນເລີ່ມຮັ່ງມີເພີ່ມຂຶ້ນ
ແນວນັ້ນ, ແລະ ເລີ່ມແລກປ່ຽນສິນຄ້າຈາກ
ກັນ, ແລະ ຍິ່ງໃຫຍ່ຂຶ້ນ ແລະ ເລີ່ມເປັນ
ຄົນສະຫລາດແກມໂກງ, ແລະ ສະຫລາດ
ໃນເລື່ອງທາງໂລກ, ແທ້ຈິງແລ້ວ ເປັນຄົນ
ສະຫລາດແກມໂກງຫລາຍ, ເບີກບານ
ໃນຄວາມຊົ່ວຮ້າຍ, ແລະ ການປຸ້ນສະດົມ
ຕ່າງໆ, ເວັ້ນເສຍແຕ່ບໍ່ໄດ້ເຮັດຢູ່ໃນບັນດາ
ພີ່ນ້ອງຂອງຕົນເອງ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະ
ມິວລອນເລີ່ມໃຊ້ [ກ]ສິດອຳນາດກັບແອວມາ
ແລະ ພີ່ນ້ອງຂອງເພິ່ນ, ແລະ ເລີ່ມຂົ່ມເຫັງ
ເພິ່ນ, ແລະ ໃຫ້ລູກຫລານຂອງຕົນຂົ່ມເຫັງ
ລູກຫລານຂອງເພິ່ນ.
9 ເພາະອະມິວລອນຮູ້ວ່າແອວມາເຄີຍ
ເປັນ [ກ]ຜູ້ໜຶ່ງໃນພວກປະໂລຫິດຂອງ
ກະສັດ, ແລະ ເພິ່ນເປັນຄົນເຊື່ອຖືໃນຄຳ
ເວົ້າຂອງອະບີນາໄດ ແລະ ຖືກຂັບໄລ່ອອກ
ໄປຕໍ່ໜ້າກະສັດ, ແລະ ສະນັ້ນ ລາວຈຶ່ງ
ຄຽດແຄ້ນໃຫ້ເພິ່ນ; ເຖິງແມ່ນວ່າລາວຂຶ້ນ
ກັບກະສັດເລມັນກໍຕາມ, ແຕ່ລາວກໍຍັງໃຊ້
ສິດອຳນາດກັບເພິ່ນ, ແລະ ໃຫ້ເພິ່ນເຮັດ
[ຂ]ວຽກໜັກ, ແລະ ຈັດນາຍຄຸມພວກເຂົາ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກນີ້ໄດ້ຮັບຄວາມທຸກຢ່າງໜັກຈົນເລີ່ມ
ຮ້ອງທູນຕໍ່ພຣະເຈົ້າຢ່າງສຸດກຳລັງ.
11 ແລະ ອະມິວລອນສັ່ງໃຫ້ພວກນີ້ຢຸດ
ການຮ້ອງທູນ; ແລະ ລາວໄດ້ວາງນາຍຍາມ
ໄວ້ທຸກດ້ານເພື່ອຄຸມພວກເຂົາ, ຖ້າເຫັນຜູ້
ໃດກໍຕາມເອີ້ນຫາພຣະເຈົ້າ ຜູ້ນັ້ນຈະຕ້ອງ
ຕາຍ.
12 ແລະ ແອວມາກັບຜູ້ຄົນຂອງເພິ່ນບໍ່
ໄດ້ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາອອກສຽງ, ແຕ່ພວກເຂົາ
ໄດ້ [ກ]ທຸ້ມເທໃຈຂອງພວກເຂົາແດ່ພຣະອົງ;
ແລະ ພຣະອົງຮູ້ຈັກຄວາມນຶກຄິດຂອງໃຈ
ຂອງພວກເຂົາ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຸ
ລະສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງ
ພວກເຂົາໃນທ່າມກາງຄວາມທຸກຂອງ
ພວກເຂົາ, ມີຄວາມວ່າ: ຈົ່ງເງີຍໜ້າຂຶ້ນ
ແລະ ຈົ່ງສະບາຍໃຈເຖີດ, ເພາະວ່າເຮົາຮູ້
ຈັກເຖິງພັນທະສັນຍາທີ່ພວກເຈົ້າເຮັດໄວ້
ກັບເຮົາ; ແລະ ເຮົາຈະເຮັດພັນທະສັນຍາ
ກັບຜູ້ຄົນຂອງເຮົາ ເພື່ອປົດປ່ອຍພວກເຂົາ
ອອກຈາກຄວາມເປັນທາດ.
14 ແລະ ເຮົາຈະໃຫ້ພາລະແບກຫາບຢູ່
ບ່າຂອງພວກເຈົ້າເບົາບາງລົງຈົນວ່າພວກ

**24** 8 *ກ* ຄພ 121:39.
9 *ກ* ມຊຢ 17:1–4; 23:9.
*ຂ* ມຊຢ 21:3–6.
12 *ກ* ຄມພ ອະທິຖານ, ການອະ
ທິຖານ, ຄຳອະທິຖານ.

ເຈົ້າບໍ່ຮູ້ສຶກວ່າ ມີຫຍັງຢູ່ເທິງຫລັງເລີຍ ເຖິງ
ແມ່ນໃນຂະນະທີ່ພວກເຈົ້າເປັນທາດ; ແລະ
ເລື່ອງນີ້ເຮົາຈະເຮັດໄປ ເພື່ອພວກເຈົ້າຈະ
ໄດ້ຢືນເປັນ *ກ*ພະຍານໃຫ້ເຮົາໃນພາຍໜ້າ,
ແລະ ເພື່ອພວກເຈົ້າຈະຮູ້ຈັກຢ່າງແນ່ນອນ
ວ່າ ເຮົາຄື ອົງພຣະຜູ້ເປັນເຈົ້າ, ໄດ້ມາຢ້ຽມ
ຢາມຜູ້ຄົນຂອງເຮົາໃນ *ຂ*ຄວາມທຸກຂອງ
ພວກເຂົາ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ພາ
ລະແບກຫາບຊຶ່ງຢູ່ເທິງບ່າຂອງ ແອວມາ
ກັບພີ່ນ້ອງຂອງເພິ່ນຖືກເຮັດໃຫ້ເບົາບາງ
ລົງ; ແທ້ຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ເພີ່ມ
*ກ*ພະລັງໃຫ້ພວກເຂົາ ເພື່ອພວກເຂົາຈະ
ໄດ້ທົນຕໍ່ *ຂ*ພາລະແບກຫາບຢ່າງງ່າຍດາຍ,
ແລະ ພວກເຂົາໄດ້ຍອມຮັບຢ່າງເບີກບານ
ມ່ວນຊື່ນ ແລະ ດ້ວຍ *ຄ*ຄວາມອົດທົນຕໍ່
ພຣະປະສົງທັງໝົດຂອງພຣະຜູ້ເປັນເຈົ້າ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ສັດທາ ແລະ ຄວາມອົດທົນຂອງພວກເຂົາ
ນັ້ນໃຫຍ່ຫລວງຈົນວ່າ ສຸລະສຽງຂອງພຣະ
ຜູ້ເປັນເຈົ້າມາຫາພວກເຂົາອີກ, ມີຄວາມ
ວ່າ: ຈົ່ງສະບາຍໃຈເຖີດ, ເພາະວ່າໃນມື້ອື່ນ
ເຮົາຈະມາປົດປ່ອຍພວກເຈົ້າອອກຈາກ
ຄວາມເປັນທາດແລ້ວ.
17 ແລະ ພຣະອົງໄດ້ກ່າວກັບ ແອວມາ
ວ່າ: ເຈົ້າຈົ່ງອອກໜ້າຜູ້ຄົນພວກນີ້ໄປ,
ແລະ ເຮົາຈະໄປກັບເຈົ້າ ແລະ ຈະປົດປ່ອຍ
ຜູ້ຄົນພວກນີ້ອອກຈາກ *ກ*ຄວາມເປັນທາດ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຕອນກາງຄືນ ແອວມາກັບຜູ້ຄົນຂອງເພິ່ນ
ໄດ້ເຕົ້າໂຮມຝູງສັດ ແລະ ພືດພັນຂອງພວກ
ເຂົາໄວ້; ແທ້ຈິງແລ້ວ, ແມ່ນແຕ່ຕະຫລອດ
ທັງຄືນທີ່ພວກເຂົາໄດ້ເຕົ້າໂຮມຝູງສັດຂອງ
ພວກເຂົາເຂົ້າກັນ.
19 ແລະ ໃນຕອນເຊົ້າ ພຣະຜູ້ເປັນເຈົ້າ
ເຮັດໃຫ້ຊາວເລມັນ *ກ*ນອນຫລັບສະໜິດ,
ແທ້ຈິງແລ້ວ, ແລະ ພວກຫົວໜ້າງານທັງ
ໝົດກໍນອນຫລັບສະໜິດ.
20 ແລະ ແອວມາກັບຜູ້ຄົນຂອງເພິ່ນໄດ້
ເດີນທາງເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ;
ແລະ ໃຊ້ເວລາເດີນທາງໝົດມື້ ແລ້ວຈຶ່ງໄດ້
ຕັ້ງຜ້າເຕັ້ນຂຶ້ນຢູ່ໃນຮ່ອມພູບ່ອນໜຶ່ງ ແລະ
ຕັ້ງຊື່ຮ່ອມພູນັ້ນວ່າ ແອວມາ, ເພາະວ່າເພິ່ນ
ໄດ້ນຳທາງພວກເຂົາເຂົ້າໄປໃນຖິ່ນແຫ້ງ
ແລ້ງກັນດານ.
21 ແທ້ ຈິງ ແລ້ວ, ແລະ ຢູ່ ໃນ ຮ່ອມ ພູ
ແອວມານັ້ນ ພວກເຂົາໄດ້ຫຸ້ມເທ *ກ*ຄວາມ
ຂອບພຣະໄທຂອງພວກເຂົາແດ່ ພຣະຜູ້
ເປັນເຈົ້າເພາະພຣະອົງໄດ້ເມດຕາພວກ
ເຂົາ, ແລະ ເຮັດໃຫ້ພາລະແບກຫາບຂອງ
ພວກເຂົາເບົາບາງລົງ, ແລະ ປົດປ່ອຍພວກ
ເຂົາອອກຈາກຄວາມເປັນທາດ; ເພາະວ່າ
ພວກເຂົາເຄີຍໄດ້ຢູ່ໃນຄວາມເປັນທາດ
ມາ, ແລະ ບໍ່ມີຜູ້ໃດຈະປົດປ່ອຍພວກເຂົາ
ໄດ້ນອກຈາກພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ.
22 ແ ລະ ພວກ ເຂົາ ໄດ້ ຖວາຍ ຄວາມ
ຂອບພຣະໄທແດ່ພຣະເຈົ້າ, ແທ້ຈິງແລ້ວ,
ພວກຜູ້ຊາຍຂອງພວກເຂົາ ແລະ ພວກຜູ້
ຍິງຂອງພວກເຂົາ ແລະ ພວກເດັກນ້ອຍທັງ
ໝົດຂອງພວກເຂົາທີ່ເວົ້າໄດ້, ໄດ້ສົ່ງສຽງ
ສັນລະເສີນພຣະເຈົ້າຂອງພວກເຂົາ.

14 *ກ* ຄມພ ພະຍານ.
*ຂ* ຄມພ ຍາກລຳບາກ, ຄວາມຍາກລຳບາກ.
15 *ກ* ມທ 11:28–30.
*ຂ* ແອວ 31:38; 33:23.
*ຄ* ຄພ 54:10. ຄມພ ອົດທົນ, ຄວາມອົດທົນ.
17 *ກ* ຄມພ ຊະເລີຍ, ການເປັນຊະເລີຍ.
19 *ກ* 1 ຊມອ 26:12.
21 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.

23 ແລະ ບັດນີ້ພຣະຜູ້ເປັນເຈົ້າໄດ້ກ່າວກັບແອວມາວ່າ: ເຈົ້າຈົ່ງຟ້າວໜີອອກຈາກແຜ່ນດິນນີ້ໄປພ້ອມທັງຜູ້ຄົນພວກນີ້ ເພາະວ່າຊາວເລມັນຕື່ນແລ້ວ ແລະ ໄດ້ຕິດຕາມພວກເຈົ້າມາ; ສະນັ້ນ ໃຫ້ພວກເຈົ້າອອກຈາກແຜ່ນດິນນີ້, ແລະ ເຮົາຈະຢຸດຊາວເລມັນໄວ້ໃນຮ່ອມພູນີ້ ເພື່ອພວກເຂົາຈະບໍ່ຕິດຕາມຜູ້ຄົນພວກນີ້ໄປ.

24 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ອອກໄປຈາກຮ່ອມພູນັ້ນ ແລະ ໄດ້ອອກເດີນທາງເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.

25 ຫລັງ ຈາກ ພວກ ເຂົາ ຢູ່ ໃນ ຖິ່ນ ແຫ້ງແລ້ງກັນດານເປັນເວລາສິບສອງມື້ ພວກເຂົາ ກໍ ມາຮອດ ແຜ່ນດິນ ເຊຣາເຮັມລາ; ແລະ ກະສັດ ໂມໄຊຢາໄດ້ຕ້ອນຮັບພວກເຂົາດ້ວຍຄວາມຊື່ນຊົມ.

## ບົດທີ 25

*ລູກຫລານຂອງມິວເລັກ ທີ່ເຊຣາເຮັມລາກາຍເປັນຊາວນີໄຟ—ພວກເຂົາໄດ້ຮູ້ເຖິງຜູ້ຄົນຂອງແອວມາ ແລະ ຜູ້ຄົນຂອງຊີນິບ—ແອວມາໃຫ້ບັບຕິສະມາແກ່ລິມໄຮ ແລະ ຜູ້ຄົນທັງໝົດຂອງເພິ່ນ—ໂມໄຊຢາມອບສິດອຳນາດໃຫ້ແອວມາຈັດຕັ້ງສາດສະໜາຈັກຂອງພຣະເຈົ້າຂຶ້ນ. ປະມານ 120 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ກະສັດໂມໄຊຢາໄດ້ສັ່ງໃຫ້ຜູ້ຄົນທັງໝົດມາເຕົ້າໂຮມກັນ.

2 ບັດນີ້ລູກຫລານຂອງນີໄຟ ຫລື ວ່າຜູ້ສືບຕະກຸນຂອງນີໄຟ ບໍ່ ມີ ຫລາຍ ເທົ່າກັບ [ກ]ຜູ້ຄົນຂອງເຊຣາເຮັມລາ, ຜູ້ຊຶ່ງເປັນຜູ້ສືບຕະກຸນຂອງ [ຂ]ມິວເລັກ, ແລະ ພວກທີ່ເດີນທາງມາກັບເພິ່ນໃນຖິ່ນແຫ້ງແລ້ງກັນດານ.

3 ແລະ ຜູ້ຄົນຂອງນີໄຟ ແລະ ຜູ້ຄົນຂອງເຊຣາເຮັມລາກໍຍັງບໍ່ຫລາຍເທົ່າກັບຊາວເລມັນ; ແທ້ຈິງແລ້ວ, ມີບໍ່ຮອດເຄິ່ງໜຶ່ງຂອງຈຳນວນຂອງພວກນັ້ນຊ້ຳ.

4 ແລະ ບັດນີ້ຜູ້ຄົນຂອງນີໄຟທັງໝົດໄດ້ມາເຕົ້າໂຮມກັນເປັນກຸ່ມໜຶ່ງ, ແລະ ຜູ້ຄົນຂອງເຊຣາເຮັມລາກໍໄດ້ເຕົ້າໂຮມກັນເປັນກຸ່ມໜຶ່ງເໝືອນກັນ, ແລະ ພວກເຂົາໄດ້ມາເຕົ້າໂຮມກັນເປັນສອງກຸ່ມ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໄຊຢາໄດ້ອ່ານ ແລະ ໃຫ້ອ່ານບັນທຶກຂອງຊີນິບສູ່ຜູ້ຄົນຂອງເພິ່ນຟັງ; ແທ້ຈິງແລ້ວ, ເພິ່ນໄດ້ອ່ານບັນທຶກຂອງຜູ້ຄົນຂອງຊີນິບນັບຕັ້ງແຕ່ເວລາທີ່ພວກເຂົາອອກຈາກແຜ່ນດິນເຊຣາເຮັມລາໄປຈົນເຖິງເວລາທີ່ພວກເຂົາກັບຄືນມາ.

6 ແລະ ເພິ່ນ ໄດ້ ອ່ານ ເລື່ອງ ລາວ ຂອງແອວມາກັບພີ່ນ້ອງຂອງເພິ່ນນຳອີກ, ເຖິງຄວາມທຸກທັງໝົດຂອງພວກເຂົານັບຕັ້ງແຕ່ເວລາທີ່ພວກເຂົາອອກຈາກແຜ່ນດິນເຊຣາເຮັມລາໄປ ຈົນເຖິງເວລາທີ່ພວກເຂົາກັບຄືນມາ.

7 ແລະ ບັດນີ້, ເມື່ອ ໂມໄຊຢາອ່ານບັນທຶກຈົບ ແລ້ວ ຜູ້ຄົນຂອງເພິ່ນຜູ້ຢູ່ໃນແຜ່ນດິນເຕັມໄປດ້ວຍຄວາມສົງໄສ ແລະ ປະຫລາດໃຈ.

8 ເພາະວ່າພວກເຂົາບໍ່ຮູ້ວ່າຈະຄິດແນວໃດ; ເພາະວ່າເມື່ອພວກເຂົາເຫັນຜູ້ທີ່ຖືກປົດປ່ອຍ [ກ]ອອກມາຈາກຄວາມເປັນທາດແລ້ວ ພວກເຂົາກໍເຕັມໄປດ້ວຍຄວາມຊື່ນຊົມຢ່າງລົ້ນເຫລືອ.

9 ແລະ ອີກ ເທື່ອ ໜຶ່ງ, ເມື່ອ ພວກ ເຂົາຄິດເຖິງພີ່ນ້ອງຂອງພວກເຂົາຜູ້ທີ່ຖືກຊາວ

**25** 2*ກ* ອມນ 1:13–19.
*ຂ* ຣລມ 6:10.
ຄມພ ມິວເລັກ.
8*ກ* ມຊຍ 22:11–13.

ເລມັນຂ້າຖິ້ມນັ້ນ ພວກເຂົາກໍເຕັມໄປດ້ວຍ
ຄວາມເສົ້າສະຫລົດໃຈ, ຈົນເຖິງນ້ຳຕາຕົກ
ເພາະຄວາມເສົ້າສະຫລົດໃຈນັ້ນ.
10 ແລະ ອີກເທື່ອໜຶ່ງ, ເມື່ອພວກເຂົາຄິດ
ເຖິງພຣະກະລຸນາທີ່ຄຸນທັນທີຂອງພຣະເຈົ້າ,
ແລະ ອຳນາດ ຂອງພຣະ ອົງ ໃນ ການ ປົດ
ປ່ອຍແອວມາກັບພີ່ນ້ອງຂອງເພິ່ນໃຫ້ພົ້ນ
ຈາກກຳມືຂອງຊາວເລມັນ ແລະ ພົ້ນຈາກ
ຄວາມເປັນທາດແລ້ວ, ພວກເຂົາກໍໄດ້ຮ້ອງ
ສົ່ງສຽງຖວາຍຂອບພຣະຄຸນແດ່ພຣະເຈົ້າ.
11 ແລະ ອີກເທື່ອໜຶ່ງ, ເມື່ອພວກເຂົາ
ຄິດເຖິງຊາວເລມັນ, ຊຶ່ງເປັນພີ່ນ້ອງຂອງ
ພວກເຂົາ, ແລະ ຄິດເຖິງສະພາບອັນເຕັມ
ໄປດ້ວຍບາບ ແລະ ຄວາມເປິເປື້ອນຂອງ
ພວກເຂົາ, ພວກເຂົາກໍເຕັມໄປດ້ວຍຄວາມ
[ກ]ເຈັບປວດລວດລ້າວເພາະເຫັນແກ່ຄວາມ
ຜາສຸກຂອງ [ຂ]ຈິດວິນຍານຂອງພວກເຂົາ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກທີ່ເປັນລູກຫລານຂອງອະມິວລອນ
ແລະ ພີ່ນ້ອງຂອງລາວ ຊຶ່ງໄດ້ລັກເອົາພວກ
ລູກສາວຂອງຊາວເລມັນໄປເປັນເມຍກໍບໍ່ພໍ
ໃຈໃນຄວາມປະພຶດຂອງບັນພະບຸລຸດຂອງ
ຕົນ ແລະ ບໍ່ຍອມໃສ່ຊື່ຕາມບັນພະບຸລຸດ
ຂອງຕົນອີກຕໍ່ໄປ, ສະນັ້ນພວກເຂົາຈຶ່ງຮັບ
ເອົາຊື່ຂອງນີໄຟມາເປັນຊື່ຂອງຕົນ ເພື່ອ
ພວກເຂົາຈະໄດ້ຖືກເອີ້ນວ່າເປັນລູກຫລານ
ຂອງຊາວນີໄຟ ແລະ ຖືກນັບເຂົ້າຢູ່ໃນບັນ
ດາຜູ້ທີ່ມີຊື່ວ່າຊາວນີໄຟ.
13 ແລະ ບັດນີ້ຜູ້ຄົນຂອງເຊຣາເຮັມລາ
ທັງໝົດຖືກ [ກ]ນັບເຂົ້າຢູ່ກັບຊາວນີໄຟ, ແລະ
ຈະບໍ່ມອບລາຊາອານາຈັກ ໃຫ້ຜູ້ໃດເລີຍ
ນອກຈາກຈະເປັນຜູ້ສືບຕະກຸນຂອງນີໄຟ.
14 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອໂມໄຊຢາກ່າວ ແລະ ອ່ານແກ່ຜູ້ຄົນ
ຈົບແລ້ວ, ເພິ່ນປາດຖະໜາຈະໃຫ້ແອວມາ
ກ່າວກັບຜູ້ຄົນອີກ.
15 ແລະ ແອວມາໄດ້ກ່າວກັບພວກເຂົາ
ເວລາທີ່ພວກເຂົາເຕົ້າໂຮມກັນເປັນກຸ່ມ
ໃຫຍ່, ແລະ ເພິ່ນໄດ້ໄປຫາແຕ່ລະກຸ່ມ, ສັ່ງ
ສອນເຖິງການກັບໃຈ ແລະ ການມີສັດທາ
ໃນພຣະຜູ້ເປັນເຈົ້າ.
16 ແລະ ເພິ່ນໄດ້ຊັກຊວນຜູ້ຄົນຂອງ
ລິມໄຮ ແລະ ພີ່ນ້ອງຂອງເພິ່ນ, ຄົນທັງໝົດ
ທີ່ໄດ້ຮັບການປົດປ່ອຍອອກຈາກຄວາມ
ເປັນທາດ, ວ່າພວກເຂົາຄວນຈື່ຈຳໄວ້ວ່າ
ແມ່ນພຣະຜູ້ເປັນເຈົ້າທີ່ໄດ້ປົດປ່ອຍພວກ
ເຂົາ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກແອວມາໄດ້ສິດສອນຜູ້ຄົນໃນ
ຫລາຍເລື່ອງ ແລະ ຈົບການເວົ້າກັບພວກ
ເຂົາແລ້ວ, ກະສັດລິມໄຮປາດຖະໜາທີ່ຈະ
ຮັບບັບຕິສະມາ; ແລະ ຜູ້ຄົນຂອງເພິ່ນທັງ
ໝົດກໍປາດຖະໜາທີ່ຈະຮັບບັບຕິສະມາ
ເໝືອນກັນ.
18 ສະນັ້ນ, ແອວມາຈຶ່ງໄດ້ອອກໄປໃນ
ນ້ຳ ແລະ ໃຫ້ [ກ]ບັບຕິສະມາແກ່ພວກເຂົາ;
ແທ້ຈິງແລ້ວ, ເພິ່ນໄດ້ໃຫ້ບັບຕິສະມາຕາມ
ວິທີດຽວດັ່ງທີ່ເພິ່ນໄດ້ກະທຳກັບພີ່ນ້ອງ
ຂອງເພິ່ນໃນ [ຂ]ນ້ຳມໍມອນ; ແທ້ຈິງແລ້ວ, ມີ
ຄົນເປັນຈຳນວນຫລວງຫລາຍທີ່ເພິ່ນໄດ້
ໃຫ້ບັບຕິສະມາ ແລະ ໄດ້ຂຶ້ນກັບສາດສະ
ໜາຈັກຂອງພຣະເຈົ້າ; ແລະ ນີ້ເປັນຍ້ອນ
ຄວາມເຊື່ອຖືຂອງພວກເຂົາທີ່ມີຕໍ່ຄຳເວົ້າ
ຂອງແອວມາ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກະສັດໂມໄຊຢາອະນຸຍາດໃຫ້ແອວມາ

11 *ກ* ມຊຍ 28:3–4;
ແອວ 13:27.
*ຂ* ຄມພ ຈິດວິນຍານ—ຄຸນ
ຄ່າຂອງຈິດວິນຍານ.
13 *ກ* ອມນ 1:19.
18 *ກ* ມຊຍ 21:35.
*ຂ* ມຊຍ 18:8–17.

ສະຖາປະນາສາດສະໜາຈັກຂຶ້ນ ທົ່ວແຜ່ນ
ດິນເຊຣາເຮັມລາ; ແລະ ໃຫ້ [ກ]ອຳນາດແກ່
ເພິ່ນເພື່ອແຕ່ງຕັ້ງປະໂລຫິດ ແລະ ຜູ້ສອນ
ເພື່ອດູແລສາດສະໜາຈັກທົ່ວທຸກບ່ອນ.
20 ບັດນີ້ຕ້ອງເຮັດແນວນີ້ເພາະວ່າມັນ
ມີຄົນເປັນຈຳນວນຫລວງຫລາຍຈົນວ່າຜູ້
ສອນຜູ້ດຽວປົກຄອງພວກເຂົາທັງໝົດບໍ່
ໄດ້; ເພາະພວກເຂົາທັງໝົດບໍ່ສາມາດໄດ້
ຍິນພຣະຄຳຂອງພຣະເຈົ້າໃນບ່ອນຊຸມນຸມ
ບ່ອນດຽວໄດ້;
21 ສະນັ້ນ ພວກເຂົາຈຶ່ງໄດ້ຊຸມນຸມກັນ
ແຕ່ລະກຸ່ມແຕກຕ່າງກັນ, ຊຶ່ງເອີ້ນວ່າສາດ
ສະໜາຈັກ; ແຕ່ລະສາດສະໜາຈັກມີປະ
ໂລຫິດຂອງຕົນເອງ ແລະ ມີຜູ້ສອນຂອງ
ຕົນເອງ, ແລະ ປະໂລຫິດທຸກຄົນສິດສອນ
ພຣະຄຳຕາມທີ່ໄດ້ຮັບມອບໃຫ້ພວກເຂົາ
ຈາກປາກຂອງແອວມາ.
22 ແລະ ເຖິງແມ່ນວ່າ ມັນມີສາດສະໜາ
ຈັກຫລາຍບ່ອນກໍຕາມ, ແຕ່ລະບ່ອນກໍເປັນ
[ກ]ສາດສະໜາຈັກດຽວກັນ, ແທ້ຈິງແລ້ວ, ຄື
ສາດສະໜາຈັກຂອງພຣະເຈົ້າ; ເພາະວ່າ
ບໍ່ມີການສັ່ງສອນຫຍັງໝົດໃນສາດສະໜາ
ຈັກນອກຈາກເລື່ອງການກັບໃຈ ແລະ ການ
ມີສັດທາໃນພຣະເຈົ້າ.
23 ແລະ ບັດນີ້ມີສາດສະໜາຈັກຢູ່ເຈັດ
ບ່ອນໃນແຜ່ນດິນເຊຣາເຮັມລາ. ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ປາດ
ຖະໜາທີ່ຈະຮັບເອົາ [ກ]ພຣະນາມຂອງພຣະ
ຄຣິດ, ຫລື ພຣະເຈົ້າ, ຜູ້ນັ້ນກໍໄດ້ເຂົ້າຮ່ວມ
ກັບສາດສະໜາຈັກຂອງພຣະເຈົ້າ;
24 ແລະ ພວກເຂົາຖືກເອີ້ນວ່າ [ກ]ຜູ້ຄົນ
ຂອງພຣະເຈົ້າ. ແລະ ພຣະຜູ້ເປັນເຈົ້າໄດ້
ຖອກເທພຣະວິນຍານຂອງພຣະອົງ ລົງ
ມາເທິງພວກເຂົາ, ແລະ ພວກເຂົາໄດ້ຮັບ
ພອນ, ແລະ ຈະເລີນຮຸ່ງເຮືອງຢູ່ໃນແຜ່ນ
ດິນນັ້ນ.

## ບົດທີ 26

*ສະມາຊິກຂອງສາດສະໜາຈັກຫລາຍຄົນຖືກນຳພາໄປຫາບາບ ໂດຍຜູ້ທີ່ບໍ່ເຊື່ອຖື—ແອວມາ ໄດ້ຮັບສັນຍາທີ່ຈະມີຊີວິດນິລັນດອນ—ຜູ້ທີ່ກັບໃຈ ແລະ ຮັບບັບຕິສະມາໄດ້ຮັບການໃຫ້ອະໄພ—ສະມາຊິກຂອງສາດສະໜາຈັກຜູ້ທີ່ເຮັດບາບຊຶ່ງໄດ້ກັບໃຈ ແລະ ສາລະພາບຜິດຕໍ່ແອວມາ ແລະ ພຣະຜູ້ເປັນເຈົ້າ ຈະໄດ້ຮັບການອະໄພໂທດ; ຖ້າບໍ່ດັ່ງນັ້ນ, ພວກເຂົາຈະບໍ່ຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຂອງສາດສະໜາຈັກ. ປະມານ 120–100 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ມີຄົນ
ລຸ້ນໃໝ່ເປັນຈຳນວນຫລວງຫລາຍທີ່ບໍ່ເຂົ້າ
ໃຈຄຳເວົ້າຂອງກະສັດເບັນຢາມິນ, ໂດຍທີ່
ຍັງເປັນເດັກນ້ອຍໆຢູ່ໃນເວລາທີ່ເພິ່ນກ່າວ
ກັບຜູ້ຄົນຂອງເພິ່ນ; ແລະ ພວກເຂົາບໍ່ເຊື່ອ
ຖືຮີດຄອງປະເພນີຂອງບັນພະບຸລຸດຂອງ
ພວກເຂົາ.
2 ພວກເຂົາບໍ່ເຊື່ອເລື່ອງທີ່ມີກ່າວໄວ້ກ່ຽວ
ກັບການຟື້ນຄືນຊີວິດຂອງຄົນຕາຍ, ທັງ
ບໍ່ເຊື່ອກ່ຽວກັບການສະເດັດມາຂອງພຣະ
ຄຣິດ.
3 ແລະ ບັດນີ້ເປັນຍ້ອນຄວາມບໍ່ເຊື່ອຖື
ຂອງພວກເຂົາ, ພວກເຂົາຈຶ່ງບໍ່ [ກ]ເຂົ້າໃຈ
ພຣະຄຳຂອງພຣະເຈົ້າ; ແລະ ໃຈຂອງ
ພວກເຂົາແຂງກະດ້າງ.
4 ແລະ ພວກເຂົາບໍ່ຍອມຮັບບັບຕິສະມາ;

19 *ກ* ຄມພ ຖານະປະໂລຫິດ.
22 *ກ* ມຊຍ 18:17.
23 *ກ* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
24 *ກ* ຄມພ ພັນທະສັນຍາ.
**26** 3 *ກ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.

ທັງບໍ່ຍອມເຂົ້າຮ່ວມສາດສະໜາຈັກ. ແລະ ພວກເຂົາເປັນພວກໜຶ່ງທີ່ຢູ່ຕາມສັດທາຂອງຕົນເອງ, ແລະ ເປັນຢູ່ຈົນວ່າຕົກຢູ່ໃນສະພາບແຫ່ງ [ກ]ການມະລົນ ແລະ ເຕັມໄປດ້ວຍບາບ ເພາະວ່າພວກເຂົາບໍ່ຍອມເອີ້ນຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.

5 ແລະ ບັດນີ້ໃນສະໄໝການປົກຄອງຂອງໂມໄຊຢານັ້ນ ພວກເຂົາເຫລົ່ານີ້ມີບໍ່ຮອດເຄິ່ງໜຶ່ງຂອງຈຳນວນຜູ້ຄົນຂອງພຣະເຈົ້າ; ແຕ່ເປັນເພາະ [ກ]ການແຕກແຍກໃນບັນດາພີ່ນ້ອງ ພວກເຂົາຈຶ່ງກັບມີຈຳນວນຫລາຍຂຶ້ນ.

6 ເພາະເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຫລອກລວງຜູ້ຄົນທີ່ຢູ່ໃນສາດສະໜາຈັກເປັນຈຳນວນຫລວງຫລາຍດ້ວຍຄຳຍົກຍ້ອງຂອງພວກເຂົາ, ແລະ ໄດ້ເຮັດໃຫ້ພວກເຂົາກະທຳບາບຫລາຍຢ່າງ; ສະນັ້ນຈຶ່ງເປັນການສົມຄວນທີ່ຄົນຢູ່ໃນສາດສະໜາຈັກຊຶ່ງກະທຳບາບຈະຖືກສາດສະໜາຈັກ [ກ]ຕັກເຕືອນ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຖືກນຳມາຢູ່ຕໍ່ໜ້າປະໂລຫິດ, ແລະຜູ້ສອນກໍໄດ້ມອບພວກເຂົາໃຫ້ແກ່ປະໂລຫິດ; ແລະ ປະໂລຫິດຈຶ່ງນຳພວກເຂົາມາຢູ່ຕໍ່ໜ້າແອວມາ, ຜູ້ຊຶ່ງເປັນ [ກ]ມະຫາປະໂລຫິດ.

8 ບັດນີ້ກະສັດ ໂມ ໄຊ ຢາ ໄດ້ ມອບ ສິດອຳນາດໃຫ້ແກ່ແອວມາເພື່ອດູແລສາດສະໜາຈັກ.

9 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄືແອວມາບໍ່ຮູ້ຈັກຫຍັງກ່ຽວກັບພວກນີ້ເລີຍ; ແຕ່ມີພະຍານຫລາຍຄົນກ່າວຫາພວກເຂົາ; ແທ້ຈິງແລ້ວ, ຜູ້ຄົນຍືນເປັນພະຍານເຖິງຄວາມຊົ່ວຮ້າຍຂອງພວກເຂົາຢ່າງຫລວງຫລາຍ.

10 ແລະ ບັດນີ້ມັນບໍ່ເຄີຍມີເລື່ອງແນວນີ້ເກີດຂຶ້ນມາກ່ອນເລີຍໃນສາດສະໜາຈັກ; ສະນັ້ນ ແອວມາຈຶ່ງມີຄວາມຫຍຸ້ງຍາກໃນວິນຍານຂອງເພິ່ນ, ແລະ ເພິ່ນໄດ້ນຳເອົາຄົນພວກນັ້ນມາຢູ່ຕໍ່ໜ້າກະສັດ.

11 ແລະ ເພິ່ນໄດ້ກ່າວກັບກະສັດວ່າ: ຈົ່ງເບິ່ງ, ຫລາຍຄົນທີ່ພວກຂ້ານ້ອຍນຳເອົາມາຢູ່ຕໍ່ໜ້າທ່ານນີ້ ຖືກພີ່ນ້ອງຂອງພວກເຂົາກ່າວຫາ; ແທ້ຈິງແລ້ວ, ພວກເຂົາຖືກພາໄປຫາຄວາມຊົ່ວຮ້າຍນາໆປະການ. ແລະ ພວກເຂົາບໍ່ຍອມກັບໃຈຈາກຄວາມຊົ່ວຮ້າຍນັ້ນ; ສະນັ້ນ ພວກຂ້ານ້ອຍຈຶ່ງນຳພວກເຂົາມາຫາທ່ານເພື່ອທ່ານຈະໄດ້ຕັດສິນພວກເຂົາຕາມຄວາມຜິດຂອງພວກເຂົາ.

12 ກະສັດໂມໄຊຢາໄດ້ກ່າວກັບແອວມາວ່າ: ຈົ່ງເບິ່ງ, ເຮົາຈະບໍ່ຕັດສິນພວກເຂົາ; ສະນັ້ນ ເຮົາຈະ [ກ]ມອບພວກເຂົາໃຫ້ຢູ່ໃນມືຂອງທ່ານເພື່ອຕັດສິນ.

13 ແລະ ບັດນີ້ວິນຍານຂອງແອວມາມີຄວາມຫຍຸ້ງຍາກຕື່ມຂຶ້ນ; ແລະ ເພິ່ນໄດ້ທູນຖາມພຣະຜູ້ເປັນເຈົ້າວ່າ ເພິ່ນຄວນຈະເຮັດແນວໃດກ່ຽວກັບເລື່ອງນີ້, ເພາະເພິ່ນຢ້ານວ່າເພິ່ນຈະເຮັດຜິດໃນສາຍພຣະເນດຂອງພຣະເຈົ້າ.

14 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄືຫລັງ ຈາກ ເພິ່ນໄດ້ທຸ້ມເທຈິດວິນຍານທັງໝົດຂອງເພິ່ນແດ່ພຣະເຈົ້າແລ້ວ, ສຸລະສຽງ

4 ກ ຄມພ ມະນຸດທີ່ມີຈິດໃຈທຳມະດາ.
5 ກ ຄມພ ຂັດແຍ້ງ, ການຂັດແຍ້ງ; ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
6 ກ ແອວ 5:57–58; 6:3. ຄມພ ເຕືອນ, ຄຳເຕືອນ.
7 ກ ມຊຢ 29:42.
12 ກ ຄພ 42:78–93.

ຂອງພຣະຜູ້ເປັນເຈົ້າໄດ້ມາເຖິງເພິ່ນ, ມີ
ຄວາມວ່າ:
15 ແອວມາ, ເຈົ້າເປັນສຸກແລ້ວ, ແລະ ຜູ້
ທີ່ໄດ້ຮັບບັບຕິສະມາໃນ *ກ*ນ້ຳມໍມອນກໍເປັນ
ສຸກຄືກັນ. ເຈົ້າເປັນສຸກແລ້ວເພາະ *ຂ*ສັດທາ
ອັນຍິ່ງໃຫຍ່ຂອງເຈົ້າທີ່ມີໃນຄຳເວົ້າຂອງ
ອະບີນາໄດຜູ້ຮັບໃຊ້ຂອງເຮົາແຕ່ຝ່າຍດຽວ.
16 ແລະ ພວກເຂົາເປັນສຸກແລ້ວ ເພາະ
ວ່າສັດທາອັນຍິ່ງໃຫຍ່ຂອງພວກເຂົາທີ່ມີ
ໃນຄຳເວົ້າຂອງເຈົ້າແຕ່ຝ່າຍດຽວ ຊຶ່ງເຈົ້າ
ໄດ້ເວົ້າກັບພວກເຂົາ.
17 ແລະ ເຈົ້າເປັນສຸກແລ້ວ ເພາະວ່າເຈົ້າ
ໄດ້ສະຖາປະນາ *ກ*ສາດສະໜາຈັກຂຶ້ນໃນ
ບັນດາຜູ້ຄົນພວກນີ້; ແລະ ພວກເຂົາຈະ
ຖືກສະຖາປະນາຂຶ້ນ, ແລະ ພວກເຂົາຈະ
ເປັນຜູ້ຄົນຂອງເຮົາ.
18 ແທ້ຈິງແລ້ວ, ຜູ້ຄົນພວກນີ້ຜູ້ທີ່ເຕັມໃຈ
ຮັບ *ກ*ພຣະນາມຂອງເຮົາຈະໄດ້ຮັບພອນ;
ເພາະວ່າພວກເຂົາຈະຖືກເອີ້ນໃນພຣະ
ນາມຂອງເຮົາ; ແລະ ພວກເຂົາເປັນຂອງ
ເຮົາ.
19 ແລະ ເພາະວ່າເຈົ້າຖາມເຮົາກ່ຽວກັບ
ຜູ້ລ່ວງລະເມີດ, ເຈົ້າຈະໄດ້ຮັບພອນ.
20 ເຈົ້າເປັນຜູ້ຮັບໃຊ້ຂອງເຮົາ; ແລະ
ເຮົາເຮັດພັນທະສັນຍາກັບເຈົ້າວ່າ ເຈົ້າຈະ
ມີ *ກ*ຊີວິດນິລັນດອນ; ແລະ ເຈົ້າຈະໄດ້ຮັບ
ໃຊ້ເຮົາ ແລະ ອອກໄປໃນພຣະນາມຂອງ
ເຮົາ, ແລະ ເຕົ້າໂຮມແກະຂອງເຮົາເຂົ້າກັນ.
21 ແລະ ຜູ້ທີ່ໄດ້ຍິນສຽງຂອງເຮົາຈະ
ເປັນ *ກ*ແກະຂອງເຮົາ; ແລະ ເຈົ້າຈະຮັບເຂົາ
ເຂົ້າມາໃນສາດສະໜາຈັກ, ແລະ ເຮົາຈະ
ຮັບເອົາເຂົາໄວ້ຄືກັນ.
22 ເພາະ ຈົ່ງ ເບິ່ງ, ນີ້ຄືສາດສະໜາຈັກ
ຂອງເຮົາ; ຜູ້ໃດກໍຕາມທີ່ຮັບ *ກ*ບັບຕິສະມາ
ຈະຮັບບັບຕິສະມາໄວ້ກັບການກັບໃຈ.
ແລະ ຜູ້ໃດກໍຕາມທີ່ເຈົ້າຮັບໄວ້ຈະເຊື່ອໃນ
ນາມຂອງເຮົາ; ແລະ ເຮົາຈະ *ຂ*ໃຫ້ອະໄພ
ເຂົາຢ່າງເຕັມໃຈ.
23 ເພາະເຮົານີ້ແຫລະເປັນຜູ້ *ກ*ຮັບເອົາ
ບາບຂອງໂລກໄວ້; ເພາະເຮົານີ້ແຫລະເປັນ
ຜູ້ *ຂ*ສ້າງເຂົາ; ແລະ ເຮົານີ້ແຫລະເປັນຜູ້ໃຫ້
ສະຖານທີ່ບ່ອນໜຶ່ງທາງຂວາມືຂອງເຮົາ
ແກ່ຜູ້ທີ່ເຊື່ອຈົນເຖິງທີ່ສຸດ.
24 ເພາະ ຈົ່ງ ເບິ່ງ, ເຂົາຈະຖືກເອີ້ນໃນ
ນາມຂອງເຮົາ; ແລະ ຖ້າຫາກເຂົາ *ກ*ຮູ້ຈັກ
ເຮົາ ເຂົາກໍຈະອອກມາ, ແລະ ຢູ່ໃນສະຖານ
ທີ່ຊົ່ວນິລັນດອນບ່ອນໜຶ່ງທາງຂວາມືຂອງ
ເຮົາ.
25 ແລະ ເຫດການຈະບັງເກີດຂຶ້ນ ຄື
ເວລາສຽງແກເທື່ອ *ກ*ທີສອງດັງຂຶ້ນ ເມື່ອນັ້ນ
ຜູ້ທີ່ບໍ່ເຄີຍ *ຂ*ຮູ້ຈັກເຮົາຈະອອກມາ ແລະ ຢືນ
ຢູ່ຕໍ່ໜ້າເຮົາ.
26 ແລະ ເວລານັ້ນເຂົາຈະຮູ້ຈັກວ່າ ເຮົາ
ຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ເຂົາ, ແລະ ເຮົາຄືພຣະຜູ້ໄຖ່ຂອງເຂົາ; ແຕ່
ວ່າເຂົາບໍ່ຍອມຖືກໄຖ່ເລີຍ.
27 ແລະ ຈາກນັ້ນເຮົາຈະກ່າວກັບເຂົາ
ວ່າ ເຮົາບໍ່ເຄີຍ *ກ*ຮູ້ຈັກເຂົາ; ແລະ ເຂົາຈະ

15 *ກ* ມຊຢ 18:30.
*ຂ* ມຊຢ 17:2.
ຄມພ ສັດທາ.
17 *ກ* ມຊຢ 25:19–24.
18 *ກ* ມຊຢ 1:11; 5:8.
ຄມພ ພຣະເຢຊູຄຣິດ—
ການຮັບເອົາພຣະນາມຂອງ
ພຣະເຢຊູຄຣິດໄວ້ກັບເຮົາ.
20 *ກ* ຄມພ ຊີວິດນິລັນດອນ;
ຖືກເລືອກ;
ເລືອກ, ການເລືອກ.
21 *ກ* ຄມພ ຜູ້ລ້ຽງທີ່ດີ.
22 *ກ* 2 ນຟ 9:23.
ຄມພ ບັບຕິສະມາ,
ໃຫ້ບັບຕິສະມາ.
*ຂ* ຄມພ ປົດບາບ, ການປົດ
ບາບ;
ອະໄພ, ໃຫ້ອະໄພ.
23 *ກ* ຄມພ ພຣະຜູ້ໄຖ່.
*ຂ* ຄມພ ສ້າງ, ການສ້າງ.
24 *ກ* ຢຣ 17:3.
25 *ກ* ຄພ 88:99, 109.
*ຂ* ຄພ 76:81–86.
27 *ກ* ມທ 7:21–23.

[ຂ]ອອກໄປຫາໄຟ [ຄ]ອັນເປັນນິດ ຊຶ່ງຕຽມໄວ້
ສຳລັບມານກັບບໍລິວານຂອງມັນ.
28 ສະນັ້ນ ເຮົາກ່າວກັບເຈົ້າວ່າ, ຜູ້ໃດ
ທີ່ບໍ່ຍອມ [ກ]ຟັງສຽງຂອງເຮົາ, ຜູ້ນັ້ນຈະບໍ່
ໄດ້ຮັບເຂົ້າຢູ່ໃນສາດສະໜາຈັກຂອງເຮົາ,
ແລະ ເຮົາຈະບໍ່ຮັບເອົາເຂົາໃນວັນສຸດ
ທ້າຍ.
29 ສະນັ້ນ ເຮົາກ່າວກັບເຈົ້າວ່າ, ຈົ່ງອອກ
ໄປ; ແລະ ຜູ້ໃດກໍຕາມທີ່ລ່ວງລະເມີດຕໍ່
ເຮົາ, ເຈົ້າຈົ່ງ [ກ]ຕັດສິນເຂົາ [ຂ]ແລ້ວແຕ່ບາບ
ທີ່ເຂົາໄດ້ກະທຳມາ; ແລະ ຖ້າຫາກເຂົາ
[ຄ]ສາລະພາບບາບທີ່ເຂົາໄດ້ກະທຳມານັ້ນ
ຕໍ່ໜ້າເຈົ້າ ແລະ ຕໍ່ໜ້າເຮົາ, ແລະ [ງ]ກັບໃຈ
ດ້ວຍຄວາມຈິງໃຈຂອງເຂົາ, ແລ້ວເຈົ້າຈົ່ງ
ໃຫ້ [ຈ]ອະໄພແກ່ເຂົາ, ແລະ ເຮົາຈະໃຫ້ອະ
ໄພແກ່ເຂົາຄືກັນ.
30 ແທ້ຈິງແລ້ວ, ເຖິງແມ່ນວ່າຜູ້ຄົນຂອງ
ເຮົາຈະກັບໃຈ [ກ]ເທົ່າໃດເທື່ອກໍຕາມ ເຮົາ
ກໍຈະໃຫ້ [ຂ]ອະໄພແກ່ເຂົາສຳລັບການລ່ວງ
ລະເມີດຂອງເຂົາທີ່ມີຕໍ່ເຮົາ.
31 ແລະ ເຈົ້າຈົ່ງໃຫ້ [ກ]ອະໄພແກ່ການ
ລ່ວງລະເມີດຂອງກັນແລະກັນ; ເພາະຕາມ
ຄວາມຈິງແລ້ວ, ເຮົາກ່າວກັບເຈົ້າວ່າ ຜູ້ທີ່
ບໍ່ໃຫ້ອະໄພການລ່ວງລະເມີດຂອງເພື່ອນ
ບ້ານເມື່ອເຂົາເວົ້າວ່າເຂົາກັບໃຈແລ້ວ, ຜູ້
ນັ້ນຈະຖືກນຳຕົວມາຫາການກ່າວໂທດ.
32 ບັດນີ້ເຮົາກ່າວກັບເຈົ້າວ່າ, ຈົ່ງອອກ
ໄປ; ແລະ ຜູ້ໃດກໍຕາມທີ່ບໍ່ກັບໃຈຈາກບາບ
ຂອງເຂົາ ຜູ້ນັ້ນຈະບໍ່ໄດ້ນັບເຂົ້າຢູ່ໃນບັນ
ດາຜູ້ຄົນຂອງເຮົາ; ແລະ ເລື່ອງນີ້ຈະຕ້ອງ
ປະຕິບັດນັບຕັ້ງແຕ່ເວລານີ້ເປັນຕົ້ນໄປ.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາແອວມາໄດ້ຍິນຖ້ອຍຄຳເຫລົ່ານີ້
ແລ້ວ, ເພິ່ນໄດ້ຂຽນມັນໄວ້ ເພື່ອເພິ່ນຈະ
ມີມັນ, ແລະ ເພື່ອເພິ່ນຈະໄດ້ຕັດສິນຜູ້ຄົນ
ຂອງສາດສະໜາຈັກຕາມພຣະບັນຍັດ
ຂອງພຣະເຈົ້າ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາໄດ້ອອກໄປຕັດສິນຜູ້ທີ່ຖືກພາໄປ
ຫາຄວາມຊົ່ວຮ້າຍຕາມພຣະຄຳຂອງພຣະ
ຜູ້ເປັນເຈົ້າ.
35 ແລະ ຜູ້ໃດກໍຕາມທີ່ກັບໃຈຈາກບາບ
ຂອງພວກເຂົາ ແລະ ໄດ້ [ກ]ສາລະພາບຜິດ,
ແລ້ວເພິ່ນກໍໄດ້ນັບພວກເຂົາໄວ້ໃນບັນດາ
ຜູ້ຄົນຂອງສາດສະໜາຈັກ;
36 ແລະ ຜູ້ທີ່ບໍ່ຍອມສາລະພາບບາບ
ຂອງພວກເຂົາ ແລະ ບໍ່ກັບໃຈຈາກຄວາມ
ຊົ່ວຮ້າຍຂອງພວກເຂົາ, ຄົນພວກນັ້ນຈະ
ບໍ່ໄດ້ຖືກນັບໄວ້ໃນບັນດາຜູ້ຄົນຂອງສາດ
ສະໜາຈັກ, ແລະ ຊື່ຂອງພວກເຂົາຖືກ
[ກ]ລຶບອອກ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາໄດ້ຄວບຄຸມການງານທັງໝົດຂອງ
ສາດສະໜາຈັກ; ແລະ ພວກເຂົາເລີ່ມມີສັນ
ຕິສຸກຂຶ້ນອີກ ແລະ ຈະເລີນຮຸ່ງເຮືອງຢ່າງ
ຍິ່ງໃນການງານຂອງສາດສະໜາຈັກໂດຍ

---

27 *ຂ* ລກ 13:27.
*ຄ* ຄພ 76:43–44.
28 *ກ* 2 ນຟ 9:31; ຄພ 1:14.
29 *ກ* ຄມພ ພິພາກສາ, ການພິພາກສາ, ຜູ້ພິພາກສາ.
*ຂ* ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
*ຄ* 3 ນຟ 1:25. ຄມພ ສາລະພາບ, ການສາລະພາບ.
*ງ* ຄມພ ກັບໃຈ, ການກັບໃຈ.
*ຈ* ຄມພ ອະໄພ, ໃຫ້ອະໄພ.
30 *ກ* ມຣນ 6:8.
*ຂ* ອຊກ 33:11, 15–16; ກຈກ 3:19–20; ມຊຢ 29:19–20.
31 *ກ* 3 ນຟ 13:14–15; ຄພ 64:9–10.
35 *ກ* ຄມພ ສາລະພາບ, ການສາລະພາບ.
36 *ກ* ອພຍ 32:33; ແອວ 1:24. ຄມພ ການຖືກໄລ່ອອກ; ໜັງສືທະບຽນແຫ່ງຊີວິດ.

ເດີນ ໄປ ຢ່າງ ຮອບ ຄອບ ຕໍ່ ພຣະ ພັກ ຂອງ
ພຣະເຈົ້າ, ໄດ້ຮັບເອົາຫລາຍຄົນ ແລະ ໃຫ້
ບັບຕິສະມາຫລາຍຄົນ.
38 ແລະ ບັດນີ້ແອວມາກັບ ເພື່ອນຮ່ວມ
ງານຂອງເພິ່ນຊຶ່ງດູແລສາດສະໜາຈັກໄດ້
ເຮັດໄປທັງໝົດນີ້ໂດຍການເດີນໄປດ້ວຍ
ຄວາມພາກພຽນທຸກຢ່າງ, ສິດສອນພຣະຄຳ
ຂອງພຣະເຈົ້າທຸກຢ່າງ, ທົນຮັບຄວາມທຸກ
ນາໆປະການ, ຖືກຂົ່ມເຫັງໂດຍທຸກຄົນທີ່ບໍ່
ໄດ້ເປັນຂອງສາດສະໜາຈັກຂອງພຣະເຈົ້າ.
39 ແລະ ພວກເຂົາໄດ້ຕັກເຕືອນພີ່ນ້ອງ
ຂອງພວກເຂົາ; ແລະ ພວກເຂົາກໍໄດ້ຮັບ
ເອົາຄຳ [ກ]ຕັກເຕືອນ, ທຸກຄົນໂດຍພຣະຄຳ
ຂອງພຣະເຈົ້າ, ອີງຕາມບາບຂອງຕົນ, ຫລື
ວ່າບາບທີ່ເຂົາໄດ້ກະທຳໄປນັ້ນ, ໂດຍຮັບ
ບັນຊາຈາກພຣະເຈົ້າວ່າໃຫ້ [ຂ]ອະທິຖານ
ຢ່າງບໍ່ທໍ້ຖອຍ, ແລະ [ຄ]ຂອບພຣະໄທພຣະ
ອົງໃນທຸກສິ່ງ.

## ບົດທີ 27

*ໂມໄຊຢາຫ້າມບໍ່ໃຫ້ຂົ່ມເຫັງ ແລະ ບັງຄັບຄວາມສະເໝີພາບ—ແອວມາຜູ້ເປັນລູກກັບພວກລູກຊາຍທັງສີ່ຂອງກະສັດໂມໄຊຢາພະຍາຍາມທີ່ຈະທຳລາຍສາດສະໜາຈັກ—ທູດມາປະກົດ ແລະ ສັ່ງໃຫ້ພວກເຂົາເລີກການເຮັດຄວາມຊົ່ວຂອງພວກເຂົາ—ແອວມາຖືກຕິສອນໃຫ້ເປັນຄົນປາກກືກ—ມະນຸດທັງປວງຈະຕ້ອງເກີດໃໝ່ ເພື່ອຮັບເອົາຄວາມລອດ—ແອວມາກັບພວກລູກຊາຍຂອງໂມໄຊຢາປະກາດຂ່າວອັນໜ້າຊື່ນຊົມ. ປະມານ 100–92 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ມີການຂົ່ມເຫັງຈາກພວກທີ່ບໍ່ເຊື່ອຖື ຊຶ່ງ
ກະທຳຕໍ່ສາດສະໜາຈັກເພີ່ມຫລາຍຂຶ້ນ
ເລື້ອຍໆຈົນວ່າມີການຈົ່ມໃຫ້ແກ່ສາດສະ
ໜາຈັກ, ແລະ ຜູ້ນຳຂອງຕົນກ່ຽວກັບເລື່ອງ
ນີ້; ແລະ ພວກເຂົາໄດ້ຕໍ່ວ່າແອວມາ. ແລະ
ແອວມາໄດ້ມາບອກເລື່ອງນີ້ຕໍ່ກະສັດໂມ
ໄຊຢາ. ແລະ ໂມໄຊຢາໄດ້ປຶກສາຫາລືກັບ
ພວກປະໂລຫິດຂອງເພິ່ນ.
2 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກະສັດໂມໄຊຢາໄດ້ສົ່ງສານໄປທົ່ວແຜ່ນ
ດິນວ່າບໍ່ໃຫ້ຄົນທີ່ບໍ່ເຊື່ອຖື [ກ]ຂົ່ມເຫັງຄົນທີ່
ເປັນຂອງສາດສະໜາຈັກຂອງພຣະເຈົ້າ.
3 ແລະ ມີຄຳສັ່ງຢ່າງເຄັ່ງຄັດໄປຫາສາດ
ສະໜາຈັກທຸກແຫ່ງວ່າ ບໍ່ໃຫ້ມີການຂົ່ມເຫັງ
ກັນໃນບັນດາພວກເຂົາ, ວ່າໃຫ້ມີ [ກ]ຄວາມ
ສະເໝີພາບໃນບັນດາຜູ້ຄົນທັງປວງ;
4 ແລະ ບອກພວກເຂົາວ່າ ບໍ່ໃຫ້ຄວາມ
ທະນົງໃຈ ແລະ ການຖືຕົວມາລົບກວນ
[ກ]ສັນຕິສຸກຂອງພວກເຂົາ; ວ່າໃຫ້ທຸກຄົນ
[ຂ]ນັບຖືເພື່ອນບ້ານຄືກັບຕົນເອງ, ແລະ ເຮັດ
ວຽກດ້ວຍມືຂອງຕົນເພື່ອຫາລ້ຽງຊີບເພື່ອ
ຕົນເອງ.
5 ແທ້ຈິງແລ້ວ, ປະໂລຫິດກັບຜູ້ສອນທຸກ
ຄົນຄວນ [ກ]ເຮັດວຽກດ້ວຍມືເພື່ອຫາລ້ຽງ
ຊີບເພື່ອຕົນເອງ, ໃນທຸກກໍລະນີເວັ້ນເສຍ
ແຕ່ເວລາເຈັບປ່ວຍ ຫລື ຍາມຂາດແຄນທີ່
ສຸດເທົ່ານັ້ນ; ແລະ ໂດຍການກະທຳເຊັ່ນນີ້,
ພວກເຂົາໄດ້ມີ [ຂ]ພຣະຄຸນຂອງພຣະເຈົ້າຢູ່
ນຳຢ່າງຫລວງຫລາຍ.
6 ແລະ ມັນເລີ່ມມີສັນຕິສຸກຫລາຍຂຶ້ນໃນ
ແຜ່ນດິນອີກ; ແລະ ຜູ້ຄົນມີເພີ່ມຫລາຍຂຶ້ນ

39 *ກ* ຄມພ ເຕືອນ, ຄຳເຕືອນ.
*ຂ* 2 ນຟ 32:8–9.
*ຄ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
**27** 2 *ກ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
3 *ກ* ມຊຢ 23:7; 29:32.
4 *ກ* ຄມພ ສະຫງົບ, ຄວາມສະຫງົບ.
*ຂ* ຄມພ ນັບຖື.
5 *ກ* ມຊຢ 18:24, 26.
*ຂ* ຄມພ ພຣະຄຸນ.

ແລະ ເລີ່ມກະຈັດກະຈາຍໄປທົ່ວພື້ນແຜ່ນ
ດິນໂລກ, ແທ້ຈິງແລ້ວ, ໄປທາງເໜືອ ແລະ
ທາງໃຕ້, ໄປທາງຕາເວັນອອກ ແລະ ທາງ
ຕາເວັນຕົກ, ໂດຍສ້າງເມືອງໃຫຍ່ ແລະ
ສ້າງບ້ານເຮືອນຕ່າງໆຂຶ້ນທົ່ວສີ່ສ່ວນຂອງ
ແຜ່ນດິນ.
7 ແລະ ພຣະຜູ້ເປັນເຈົ້າໄດ້ສະເດັດມາ
ຢ້ຽມຢາມພວກເຂົາ, ແລະ ໄດ້ເຮັດໃຫ້ພວກ
ເຂົາຈະເລີນຮຸ່ງເຮືອງ ແລະ ຫລາຍຄົນໄດ້
ກາຍເປັນຄົນຮັ່ງມີ.
8 ແລະ ບັດນີ້ພວກລູກຊາຍຂອງໂມ
ໄຊຢາຖືກນັບເຂົ້າຢູ່ໃນບັນດາຜູ້ບໍ່ເຊື່ອຖື;
ແລະ [ກ]ລູກຊາຍຄົນໜຶ່ງຂອງແອວມາກໍຖືກ
ນັບເຂົ້າຢູ່ໃນບັນດາພວກເຂົາຄືກັນ, ລາວ
ມີຊື່ວ່າ ແອວມາ ຕາມຊື່ບິດາຂອງລາວ;
ເຖິງຢ່າງໃດກໍຕາມ, ລາວເປັນຄົນຊົ່ວທີ່ສຸດ
ແລະ [ຂ]ນັບຖືຮູບບູຊາ; ແລະ ລາວເປັນຄົນ
ເວົ້າຫລາຍ ແລະ ໄດ້ເວົ້າຍົກຍ້ອງຜູ້ຄົນ;
ສະນັ້ນ ລາວຈຶ່ງຊັກນຳຫລາຍຄົນໃຫ້ເຮັດ
ຕາມວິທີການອັນຊົ່ວຮ້າຍຂອງລາວ.
9 ແລະ ລາວກັບມາເປັນອຸບປະສັກອັນ
ໃຫຍ່ຫລວງຕໍ່ຄວາມຈະເລີນຮຸ່ງເຮືອງ
ຂອງສາດສະໜາຈັກຂອງພຣະເຈົ້າໂດຍ
ໄດ້ [ກ]ລັກເອົາໃຈຂອງຜູ້ຄົນໄປ; ເຮັດໃຫ້
ເກີດການແຕກແຍກໃນບັນດາຜູ້ຄົນ; ໃຫ້
ໂອກາດແກ່ສັດຕູຂອງພຣະເຈົ້າທີ່ຈະໃຊ້
ອຳນາດຂອງມັນປົກຄອງພວກເຂົາ.
10 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ລາວໄດ້ທ່ອງທ່ຽວໄປເພື່ອທຳລາຍສາດສະ
ໜາຈັກຂອງພຣະເຈົ້າ, ແລະ ລາວໄດ້ທ່ອງ
ທ່ຽວໄປຢ່າງລັບໆກັບພວກລູກຊາຍຂອງ
ໂມໄຊຢາເພື່ອຫາຊ່ອງທາງທີ່ຈະທຳລາຍ
ສາດສະໜາຈັກ ແລະ ເພື່ອຊັກຊວນຜູ້ຄົນ
ຂອງພຣະຜູ້ເປັນເຈົ້າໃຫ້ຫລົງຜິດ, ເຮັດກົງ
ກັນຂ້າມກັບພຣະບັນຍັດຂອງພຣະເຈົ້າ,
ຫລື ແມ່ນແຕ່ຄຳສັ່ງຂອງກະສັດ—
11 ແລະ ດັ່ງເຊັ່ນທີ່ຂ້າພະເຈົ້າໄດ້ກ່າວ
ກັບທ່ານແລ້ວວ່າ ຂະນະທີ່ພວກເຂົາກຳ
ລັງທ່ຽວໄປ [ກ]ກະບົດຕໍ່ພຣະເຈົ້າ, ຈົ່ງເບິ່ງ,
[ຂ]ທູດຂອງພຣະຜູ້ເປັນເຈົ້າອົງໜຶ່ງໄດ້ມາ
[ຄ]ປະກົດຕໍ່ພວກເຂົາ; ແລະ ເບິ່ງຄືກັບວ່າ
ທູດກຳລັງຢືນຢູ່ໃນເມກ; ແລະ ສຽງຂອງ
ທູດອົງນັ້ນຄືກັບວ່າ ສຽງຟ້າຮ້ອງຊຶ່ງເຮັດ
ໃຫ້ແຜ່ນດິນບ່ອນທີ່ພວກເຂົາຢືນຢູ່ນັ້ນສັ່ນ
ສະເທືອນ;
12 ແລະ ຄວາມປະຫລາດໃຈຂອງພວກ
ເຂົານັ້ນໃຫຍ່ຫລວງທີ່ສຸດ, ຈົນພວກເຂົາ
ລົ້ມລົງຢູ່ກັບພື້ນດິນ ແລະ ບໍ່ເຂົ້າໃຈຄຳເວົ້າ
ຂອງທູດທີ່ກ່າວກັບພວກເຂົາເລີຍ.
13 ເຖິງຢ່າງໃດກໍຕາມ ເພິ່ນຮ້ອງຂຶ້ນ
ອີກ, ມີຄວາມວ່າ: ແອວມາ, ຈົ່ງລຸກ ແລະ
ຢືນຂຶ້ນ, ເພາະດ້ວຍເຫດໃດເຈົ້າຈຶ່ງຂົ່ມ
ເຫັງສາດສະໜາຈັກຂອງພຣະເຈົ້າ? ເພາະ
ພຣະອົງໄດ້ກ່າວວ່າ: [ກ]ນີ້ຄືສາດສະໜາຈັກ
ຂອງເຮົາ ແລະ ເຮົາຈະສະຖາປະນາມັນ
ຂຶ້ນ, ແລະ ຈະບໍ່ມີສິ່ງໃດລົ້ມມັນໄດ້ນອກ
ຈາກການລ່ວງລະເມີດຂອງຜູ້ຄົນຂອງເຮົາ
ເທົ່ານັ້ນ.
14 ແລະ ອີກຢ່າງໜຶ່ງທູດກ່າວວ່າ: ຈົ່ງ
ເບິ່ງ, ພຣະຜູ້ເປັນເຈົ້າໄດ້ຍິນ [ກ]ຄຳອະທິ
ຖານຂອງຜູ້ຄົນຂອງພຣະອົງ, ແລະ ຄຳ
ອະທິຖານຂອງຜູ້ຮັບໃຊ້ຂອງພຣະອົງ,
ແອວມາ, ຜູ້ເປັນບິດາຂອງເຈົ້ານຳອີກ;
ເພາະວ່າເພິ່ນໄດ້ອະທິຖານດ້ວຍສັດທາ

8 *ກ* ຄມພ ແອວມາ, ລູກ ຊາຍຂອງແອວມາ.
*ຂ* ຄມພ ການນັບຖືຮູບບູຊາ.
9 *ກ* 2 ຊມອ 15:1–6.
11 *ກ* ຄມພ ກະບົດ, ການກະບົດ.
*ຂ* ຄມພ ທູດ, ເທວະດາ.
*ຄ* ກຈກ 9:1–9; ແອວ 8:15.
13 *ກ* ຄມພ ພຣະເຢຊູຄຣິດ—ປະ ມຸກຂອງສາດສະໜາຈັກ.
14 *ກ* ແອວ 10:22.

ກ່ຽວ ກັບ ເຈົ້າ ເພື່ອ ເຈົ້າ ຈະ ໄດ້ ຖືກ ນຳ ມາ
ໃຫ້ຮູ້ ເລື່ອງຄວາມ ຈິງ; ສະ ນັ້ນ, ເພື່ອ ຈຸດ
ປະສົງນີ້ ເຮົາຈຶ່ງມາເຮັດໃຫ້ເຈົ້າສຳນຶກເຖິງ
ອຳນາດ ແລະ ສິດອຳນາດຂອງພຣະເຈົ້າ,
ເພື່ອໃຫ້ [ຂ]ຄຳອະທິຖານຂອງຜູ້ຮັບໃຊ້ຂອງ
ພຣະອົງໄດ້ຮັບຄຳຕອບຕາມສັດທາຂອງ
ພວກເຂົາ.
15 ແລະ ບັດນີ້ຈົ່ງເບິ່ງ, ເຈົ້າຈະໂຕ້ຖຽງ
ອຳນາດ ຂອງພຣະເຈົ້າໄດ້ບໍ? ເພາະຈົ່ງ
ເບິ່ງ, ສຽງຂອງເຮົາບໍ່ໄດ້ສັ່ນສະເທືອນແຜ່ນ
ດິນໂລກບໍ? ແລະ ເຈົ້າບໍ່ເຫັນເຮົາຢູ່ຕໍ່ໜ້າ
ເຈົ້າບໍ? ແລະ ເຮົາຖືກສົ່ງມາຈາກພຣະເຈົ້າ.
16 ແລະ ບັດນີ້ເຮົາກ່າວກັບເຈົ້າວ່າ: ຈົ່ງ
ໄປ, ແລະ ຈົ່ງຈຳການເປັນຊະເລີຍຂອງ
ບັນພະບຸລຸດຂອງເຈົ້າໃນແຜ່ນດິນເຮລາມ
ແລະ ໃນແຜ່ນດິນນີໄຟ; ແລະ ຈົ່ງຈຳສິ່ງຍິ່ງ
ໃຫຍ່ທີ່ພຣະອົງໄດ້ກະທຳເພື່ອພວກເຂົາ;
ເພາະວ່າພວກເຂົາຢູ່ໃນຄວາມເປັນທາດ,
ແລະ ພຣະອົງໄດ້ [ກ]ປົດປ່ອຍພວກເຂົາ.
ແລະ ບັດນີ້ເຮົາກ່າວກັບເຈົ້າວ່າ, ແອວມາ,
ຈົ່ງໄປຕາມທາງຂອງເຈົ້າ ແລະ ຢ່າໄດ້ພະ
ຍາຍາມທຳລາຍສາດສະໜາຈັກອີກຕໍ່ໄປ,
ເພື່ອໃຫ້ຄຳອະທິຖານຂອງພວກເຂົາໄດ້
ຮັບຄຳຕອບ, ຫລື ວ່າເຈົ້າຕ້ອງການໃຫ້ຕົວ
ຂອງເຈົ້າຖືກປະຖິ້ມໄປ.
17 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ນີ້ເປັນຄຳເວົ້າສຸດທ້າຍຂອງທູດທີ່ໄດ້ກ່າວ
ກັບແອວມາ, ແລະ ເພິ່ນກໍໄດ້ຈາກໄປ.
18 ແລະ ບັດນີ້ແອວມາກັບຜູ້ທີ່ຢູ່ກັບ
ລາວໄດ້ລົ້ມລົງຢູ່ກັບພື້ນດິນ, ເພາະຄວາມ
ແປກປະຫລາດໃຈອັນໃຫຍ່ຫລວງຂອງ
ພວກເຂົາ; ເພາະວ່າພວກເຂົາໄດ້ເຫັນທູດ
ຂອງພຣະຜູ້ເປັນເຈົ້າດ້ວຍຕາຂອງຕົນເອງ;
ແລະ ສຽງຂອງເພິ່ນຄືກັນກັບຟ້າຮ້ອງ, ຊຶ່ງ
ເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນ; ແລະ
ພວກເຂົາຮູ້ວ່າ ບໍ່ມີສິ່ງໃດທີ່ຈະເຮັດໃຫ້
ແຜ່ນດິນໂລກສັ່ນສະເທືອນໄດ້ນອກຈາກ
ຈະເປັນອຳນາດຂອງພຣະເຈົ້າເທົ່ານັ້ນ ທີ່
ເຮັດໃຫ້ມັນສັ່ນສະເທືອນຄືກັນກັບວ່າມັນ
ຈະແຍກອອກຈາກກັນ.
19 ແລະ ບັດນີ້ຄວາມແປກປະຫລາດໃຈ
ຂອງແອວມານັ້ນໃຫຍ່ຫລວງຈົນວ່າລາວ
ກາຍເປັນຄົນປາກກືກ, ຈົນວ່າລາວເປີດ
ປາກບໍ່ໄດ້; ແທ້ຈິງແລ້ວ, ລາວກັບອ່ອນ
ເພຍຈົນແມ່ນແຕ່ບໍ່ສາມາດເໜັງຕີງມືໄດ້;
ສະນັ້ນ ຜູ້ທີ່ຢູ່ກັບລາວຈຶ່ງຫາມລາວໄປ
ເພາະລາວຊ່ອຍຕົວເອງບໍ່ໄດ້, ຈົນກະທັ້ງ
ຖືກເອົາໄປວາງລົງຢູ່ຕໍ່ໜ້າບິດາຂອງລາວ.
20 ແລະ ພວກນັ້ນໄດ້ເລົ່າເລື່ອງທັງໝົດ
ທີ່ໄດ້ເກີດຂຶ້ນກັບພວກເຂົາໃຫ້ບິດາຂອງ
ລາວຟັງ; ແລະ ບິດາຂອງລາວມີຄວາມປິ
ຕິຍິນດີ, ເພາະເພິ່ນຮູ້ວ່າມັນແມ່ນອຳນາດ
ຂອງພຣະເຈົ້າ.
21 ແລະ ເພິ່ນໄດ້ໃຫ້ຝູງຊົນມາເຕົ້າໂຮມ
ກັນ ເພື່ອຈະໄດ້ເປັນພະຍານໃນສິ່ງທີ່ພຣະ
ຜູ້ເປັນເຈົ້າກະທຳກັບລູກຂອງເພິ່ນ, ແລະ
ກັບຜູ້ທີ່ຢູ່ກັບລາວນຳອີກ.
22 ແລະ ເພິ່ນໄດ້ບອກໃຫ້ປະໂລຫິດທັງ
ຫລາຍມາເຕົ້າໂຮມກັນ ແລະ ເຂົາເຈົ້າໄດ້
ເລີ່ມຖືສິນອົດເຂົ້າ ແລະ ອະທິຖານເພື່ອທູນ
ຂໍໃຫ້ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ເຂົາເຈົ້າເພື່ອວ່າພຣະອົງຈະໄດ້ເປີດປາກ
ຂອງແອວມາ ເພື່ອລາວຈະສາມາດເວົ້າ
ໄດ້, ແລະ ເພື່ອແຂນຂາຂອງລາວຈະໄດ້
ຮັບກຳລັງອີກ—ເພື່ອໃຫ້ຕາຂອງຜູ້ຄົນເປີດ
ເພື່ອຈະໄດ້ເຫັນ ແລະ ຮູ້ຈັກພຣະກະລຸນາ
ທິຄຸນ ແລະ ລັດສະໝີພາບຂອງພຣະເຈົ້າ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື

14 *ຂ* ມມ 9:36–37.

16 *ກ* ມຊຢ 23:1–4.

ຫລັງຈາກພວກເຂົາໄດ້ຖືສິນອົດເຂົ້າ ແລະ
ອະທິຖານເປັນເວລາສອງມື້ສອງຄືນແລ້ວ,
ແຂນຂາຂອງແອວມາຈຶ່ງໄດ້ຮັບກຳລັງຂອງ
ມັນ, ແລະ ລາວໄດ້ຢືນຂຶ້ນ ແລະ ເລີ່ມເວົ້າ
ກັບພວກເຂົາ, ບອກໃຫ້ພວກເຂົາສະບາຍ
ໃຈ:

24 ເພາະ ລາວ ໄດ້ ເວົ້າ ວ່າ, ຂ້າ ພະ ເຈົ້າ
ໄດ້ກັບໃຈຈາກບາບຂອງຂ້າພະເຈົ້າແລ້ວ,
ແລະ ໄດ້ຖືກ [ກ]ໄຖ່ ໂດຍ ພຣະ ຜູ້ ເປັນ ເຈົ້າ
ແລ້ວ; ຈົ່ງເບິ່ງ, ຂ້າ ພະ ເຈົ້າ ໄດ້ ເກີດ ຈາກ
ພຣະວິນຍານ.

25 ແລະ ພຣະຜູ້ເປັນເຈົ້າກ່າວກັບຂ້າພະ
ເຈົ້າວ່າ: ຢ່າໄດ້ແປກໃຈເລີຍວ່າ ມະນຸດທັງ
ປວງ, ແທ້ຈິງແລ້ວ, ທັງຊາຍ ແລະ ຍິງ, ທຸກ
ປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ
ທຸກ ຜູ້ ຄົນ ທັງປວງ, ຕ້ອງ [ກ]ເກີດ ໃໝ່ ເສຍ
ກ່ອນ; ແທ້ ຈິງ ແລ້ວ, ແມ່ນເກີດຈາກພຣະ
ເຈົ້າ ເພື່ອ [ຂ]ປ່ຽນ ຈາກສະພາບ ແຫ່ງ [ຄ]ການ
ມະລົນ ແລະ ຕົກຕ່ຳຂອງພວກເຂົາ, ມາສູ່
ສະພາບແຫ່ງຄວາມຊອບທຳ, ຖືກໄຖ່ໂດຍ
ພຣະ ເຈົ້າ, ກາຍເປັນບຸດ ແລະ ທິດາຂອງ
ພຣະອົງ;

26 ແລະ ພວກ ເຂົາ ຈຶ່ງ ກາຍ ມາ ເປັນ ຄົນ
ໃໝ່ດັ່ງນັ້ນ; ແລະ ຖ້າຫາກພວກເຂົາບໍ່ເຮັດ
ແນວນີ້, ພວກເຂົາກໍ [ກ]ບໍ່ມີທາງທີ່ຈະໄດ້ຮັບ
ອານາ ຈັກຂອງພຣະ ເຈົ້າມາ ເປັນ ມູນ ມໍລະ
ດົກ.

27 ຂ້າ ພະ ເຈົ້າ ກ່າວ ກັບ ພວກ ທ່ານ ວ່າ,
ຖ້າຫາກບໍ່ເຮັດແນວນີ້, ພວກເຂົາຈະຖືກປະ
ຖິ້ມໄປ ແລະ ເລື່ອງນີ້ຂ້າພະເຈົ້າຮູ້ຈັກເພາະ
ວ່າຂ້າພະເຈົ້າເກືອບຖືກປະຖິ້ມໄປແລ້ວ.

28 ເຖິງຢ່າງໃດກໍຕາມ, ຫລັງຈາກທີ່ໄດ້
ຊັດເຊພະເນຈອນໄປໃນຄວາມທຸກຍາກ
ລຳບາກຢ່າງລົ້ນເຫລືອ, ໂດຍກັບໃຈຈົນ
ເກືອບຈະເຖິງແກ່ຄວາມຕາຍ, ພຣະຜູ້ເປັນ
ເຈົ້າມີຄວາມເມດຕາ ຊຶ່ງເຫັນສົມຄວນທີ່ຈະ
ດຶງຂ້າພະເຈົ້າອອກມາຈາກການເຜົາໄໝ້
ອັນ [ກ]ເປັນນິດ, ແລະ ຂ້າພະເຈົ້າໄດ້ເກີດ
ຈາກພຣະເຈົ້າ.

29 ຈິດວິນຍານຂອງຂ້າພະເຈົ້າໄດ້ຖືກໄຖ່
ຈາກນ້ຳບີແຫ່ງຄວາມຂົມຂື່ນ ແລະ ພັນທະ
ການແຫ່ງຄວາມຊົ່ວຮ້າຍ. ຂ້າພະເຈົ້າເຄີຍຢູ່
ໃນເຫວເລິກທີ່ມືດທີ່ສຸດມາ; ແຕ່ບັດນີ້ຂ້າພະ
ເຈົ້າໄດ້ເຫັນຄວາມສະຫວ່າງອັນໜ້າອັດສະ
ຈັນຂອງພຣະເຈົ້າ. ຈິດວິນຍານຂອງຂ້າພະ
ເຈົ້າຖືກ [ກ]ທໍລະມານດ້ວຍຄວາມທໍລະມານ
ອັນຕະຫລອດໄປ; ແຕ່ວ່າຂ້າພະເຈົ້າຖືກດຶງ
ອອກມາ ແລະ ຈິດວິນຍານຂອງຂ້າພະເຈົ້າ
ບໍ່ໄດ້ເຈັບປວດອີກຕໍ່ໄປ.

30 ຂ້າພະເຈົ້າບໍ່ຍອມຮັບພຣະຜູ້ໄຖ່ຂອງ
ຂ້າພະເຈົ້າ ແລະ ປະຕິເສດສິ່ງທີ່ບັນພະ
ບຸລຸດຂອງພວກເຮົາເວົ້າໄວ້; ແຕ່ມາບັດນີ້
ເພື່ອພວກເພິ່ນຈະເຫັນລ່ວງໜ້າວ່າ ພຣະ
ອົງຈະສະເດັດມາ ແລະ ວ່າພຣະອົງຈະຈື່
ຈຳທຸກຄົນທີ່ພຣະອົງໄດ້ສ້າງ, ພຣະອົງຈະ
ສະແດງພຣະອົງເອງໃຫ້ປະຈັກແກ່ຄົນທັງ
ປວງ.

31 ແທ້ຈິງແລ້ວ, [ກ]ທຸກຫົວເຂົ່າຈະຄຸລົງ,
ແລະ ທຸກລີ້ນຈະສາລະພາບຕໍ່ພຣະພັກຂອງ
ພຣະອົງ. ແທ້ຈິງແລ້ວ, ເຖິງແມ່ນໃນວັນສຸດ
ທ້າຍ ເມື່ອຄົນທັງປວງຈະຢືນຮັບ [ຂ]ການພິ
ພາກສາຂອງພຣະອົງ, ເມື່ອນັ້ນພວກເຂົາ

24 ກ 2 ນຟ 2:6–7.
ຄມພ ໄຖ່, ການໄຖ່, ຖືກໄຖ່.
25 ກ ຣມ 6:3–11;
ມຊຢ 5:7;
ແອວ 5:14;
ມຊ 6:59.
ຄມພ ເກີດໃໝ່, ເກີດ
ຈາກພຣະເຈົ້າ.
ຂ ມຊຢ 3:19; 16:3.
ຄ ຄມພ ການມະລົນ.
26 ກ ຢຣ 3:5.
28 ກ 2 ນຟ 9:16.
29 ກ ມຊຢ 2:38.
31 ກ ຟລປ 2:9–11;
ມຊຢ 16:1–2;
ຄພ 88:104.
ຂ ຄມພ ພຣະເຢຊູ
ຄຣິດ—ພິພາກສາ.

ຈະ ສາ ລະ ພາບ ວ່າ ພຣະ ອົງ ຄື ພຣະ ເຈົ້າ;
ເມື່ອນັ້ນຜູ້ທີ່ໃຊ້ຊີວິດ [ຄ]ປາດສະຈາກພຣະ
ເຈົ້າຢູ່ໃນໂລກຈະສາລະພາບວ່າ ການພິ
ພາກສາຂອງໂທດອັນເປັນນິດນັ້ນທ່ຽງທຳ
ແລ້ວກັບພວກເຂົາ; ແລະ ພວກເຂົາຈະສັ່ນ
ສະທ້ານ ແລະ ຫົດຕົວຢູ່ພາຍໃຕ້ການທອດ
ພຣະເນດ [ງ]ອັນພິຈາລະນາຂອງພຣະອົງ.
32 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຈາກເວລານີ້ໄປແອວມາເລີ່ມສິດສອນ
ຜູ້ຄົນ ແລະ ຜູ້ທີ່ຢູ່ກັບແອວມາຕອນທີ່ທູດ
ມາປະກົດຕໍ່ພວກເຂົາກໍເໝືອນກັນ, ໄດ້
ເດີນທາງໄປຫາທຸກບ່ອນທົ່ວແຜ່ນດິນ, ປະ
ກາດແກ່ຄົນທັງປວງເຖິງສິ່ງທີ່ພວກເຂົາໄດ້
ຍິນ ແລະ ໄດ້ເຫັນມາ, ແລະ ສັ່ງສອນພຣະ
ຄຳຂອງພຣະເຈົ້າດ້ວຍຄວາມທຸກຍາກລຳ
ບາກ, ຖືກຂົ່ມເຫັງຢ່າງໜັກຈາກຜູ້ທີ່ບໍ່ເຊື່ອ
ແລະ ຖືກຕີໂດຍຄົນຫລວງຫລາຍໃນພວກ
ນັ້ນ.
33 ເຖິງ ແມ່ນ ຈະ ເປັນ ຢ່າງ ນັ້ນ, ພວກ
ເຂົາກໍໄດ້ໃຫ້ການປອບໃຈສາດສະໜາຈັກ
ຫລາຍຂຶ້ນ, ໂດຍຢືນຢັນສັດທາຂອງພວກ
ເຂົາ, ແລະ ຊັກຊວນຜູ້ຄົນທັງຫລາຍດ້ວຍ
ຄວາມອົດກັ້ນ ແລະ ດ້ວຍຄວາມອິດເມື່ອຍ
ຢ່າງໜັກໃຫ້ຮັກສາພຣະບັນຍັດຂອງພຣະ
ເຈົ້າ.
34 ແລະ ສີ່ ຄົນ ໃນ ພວກ ເຂົາ ນັ້ນ ແມ່ນ
[ກ]ພວກລູກຊາຍຂອງ ໂມ ໄຊຢາ; ແລະ ຊື່
ຂອງພວກເຂົາຄື ອຳໂມນ, ແລະ ອາໂຣນ,
ແລະ ອອມເນີ, ແລະ ຮິມໄນ; ທັງໝົດນີ້ເປັນ
ຊື່ຂອງພວກລູກຊາຍຂອງໂມໄຊຢາ.
35 ແລະ ພວກ ເຂົາ ໄດ້ ເດີນທາງ ໄປ ຫາ
ທຸກບ່ອນໃນແຜ່ນດິນເຊຣາເຮັມລາ, ແລະ
ໃນບັນດາຜູ້ຄົນທັງໝົດ ຊຶ່ງຢູ່ໃຕ້ການປົກ
ຄອງຂອງກະສັດໂມໄຊຢາ, ໄດ້ເດີນທາງ
ຢ່າງຕັ້ງໃຈເພື່ອຈະແກ້ຄວາມເສຍຫາຍ
ທັງໝົດ ຊຶ່ງພວກເຂົາໄດ້ເຮັດໄວ້ກັບສາດ
ສະໜາຈັກ, ສາລະພາບບາບທັງໝົດຂອງ
ພວກເຂົາ, ແລະ ປະກາດເລື່ອງທັງໝົດທີ່
ພວກເຂົາໄດ້ເຫັນມາ, ແລະ ອະທິບາຍຄຳ
ທຳນາຍ ແລະ ຂໍ້ຄວາມພຣະຄຳພີໃຫ້ແກ່
ທຸກຄົນທີ່ປາດຖະໜາຈະຟັງ.
36 ແລະ ໂດຍວິທີນີ້ ພວກເຂົາຈຶ່ງເປັນ
ເຄື່ອງມືໃນພຣະຫັດຂອງພຣະເຈົ້າໃນການ
ພາຫລາຍຄົນມາສູ່ຄວາມຮູ້ເລື່ອງຄວາມ
ຈິງ, ແທ້ຈິງແລ້ວ, ມາສູ່ຄວາມຮູ້ເລື່ອງພຣະ
ຜູ້ໄຖ່ຂອງພວກເຂົາ.
37 ແລະ ພວກເຂົາເປັນສຸກແລ້ວພຽງໃດ!
ເພາະວ່າພວກເຂົາໄດ້ [ກ]ປະກາດສັນຕິສຸກ;
ແລະ ພວກເຂົາໄດ້ປະກາດ [ຂ]ຂ່າວປະເສີດ
ແຫ່ງຄວາມດີ; ແລະ ພວກເຂົາໄດ້ປະກາດ
ຕໍ່ຜູ້ຄົນວ່າພຣະຜູ້ເປັນເຈົ້າປົກຄອງ.

## ບົດທີ 28

*ພວກລູກຊາຍຂອງໂມໄຊຢາໄປສັ່ງສອນຊາວເລມັນ—ໂດຍໃຊ້ຫີນຜູ້ພະຍາກອນສອງກ້ອນນັ້ນ ໂມໄຊຢາແປແຜ່ນຈາລຶກຂອງຊາວຢາເຣັດ. ປະມານ 92 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກ [ກ]ພວກລູກຊາຍຂອງໂມໄຊຢາກະທຳ
ທຸກສິ່ງທຸກຢ່າງແລ້ວ, ພວກເຂົາໄດ້ພາຄົນ
ຈຳນວນໜຶ່ງໄປກັບພວກເຂົາ ແລະ ໄດ້ກັບ
ຄືນໄປຫາກະສັດ, ຊຶ່ງເປັນບິດາຂອງພວກ

31 *ຄ* ແອວ 41:11.
*ງ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
34 *ກ* ຄມພ ອຳໂມນ, ລູກຊາຍຂອງໂມໄຊຢາ.
37 *ກ* ອຊຢ 52:7; ມຊຢ 15:14–17. ຄມພ ສັ່ງສອນ.
*ຂ* ຄມພ ພຣະກິດຕິຄຸນ.
**28** 1 *ກ* ມຊຢ 27:34.

ເຂົາ, ແລະ ຂໍຮ້ອງເພິ່ນໃຫ້ອະນຸຍາດໃຫ້
ພວກເຂົາກັບຄົນທີ່ພວກເຂົາໄດ້ເລືອກໄວ້
ຂຶ້ນໄປຫາແຜ່ນດິນ ຂນີໄຟ ເພື່ອພວກເຂົາ
ຈະໄດ້ສັ່ງສອນເລື່ອງທີ່ພວກເຂົາໄດ້ຍິນ
ມາ, ແລະ ເພື່ອພວກເຂົາຈະໄດ້ໃຫ້ພຣະຄຳ
ຂອງພຣະເຈົ້າແກ່ພີ່ນ້ອງຂອງພວກເຂົາ ຜູ້
ຊຶ່ງເປັນຊາວເລມັນ—
2 ເພື່ອພວກເຂົາອາດຈະນຳພວກເຂົາ
ມາສູ່ຄວາມຮູ້ເລື່ອງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຂົາ, ແລະ ເຮັດ
ໃຫ້ພວກເຂົາສຳນຶກເຖິງຄວາມຊົ່ວຮ້າຍ
ຂອງບັນພະບຸລຸດຂອງພວກເຂົາ; ແລະ
ເພື່ອພວກເຂົາອາດຈະເຮັດໃຫ້ ກຄວາມ
ກຽດຊັງຂອງພວກເຂົາທີ່ມີຕໍ່ຊາວນີໄຟໝົດ
ໄປ, ເພື່ອພວກເຂົາຈະຖືກນຳມາປິຕິຍິນດີ
ໃນພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົານຳອີກ, ເພື່ອພວກເຂົາຈະກັບມາ
ເປັນເພື່ອນມິດທີ່ດີຕໍ່ກັນ, ແລະ ເພື່ອຈະບໍ່
ໃຫ້ມີການຂັດແຍ້ງກັນອີກຕໍ່ໄປໃນທົ່ວແຜ່ນ
ດິນຊຶ່ງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາໄດ້ປະທານໃຫ້ພວກເຂົາ.
3 ບັດນີ້ພວກເຂົາປາດຖະໜາຈະປະ
ກາດຄວາມລອດໃຫ້ແກ່ມະນຸດທຸກຄົນ,
ເພາະວ່າພວກເຂົາ ກທົນບໍ່ໄດ້ທີ່ ຂຈິດວິນ
ຍານຂອງຜູ້ໜຶ່ງຈະຕ້ອງຕາຍ; ແທ້ຈິງແລ້ວ,
ພຽງແຕ່ຄິດວ່າຈິດວິນຍານດວງໜຶ່ງຈະ
ຕ້ອງທໍລະມານທີ່ ຄບໍ່ມີວັນສິ້ນສຸດກໍເຮັດໃຫ້
ພວກເຂົາຫວັ່ນໄຫວ ແລະ ຕົວສັ່ນແລ້ວ.
4 ແລະ ດັ່ງນັ້ນ ພຣະວິນຍານຂອງພຣະຜູ້
ເປັນເຈົ້າໄດ້ກະທຳກັບພວກເຂົາ, ເພາະວ່າ
ພວກເຂົາເປັນຄົນ ກຊົ່ວຮ້າຍແທ້ໆໃນຄົນ
ບາບ. ແລະ ພຣະຜູ້ເປັນເຈົ້າເຫັນເໝາະສົມ
ໃນ ຂພຣະເມດຕາອັນບໍ່ມີຂອບເຂດຂອງ
ພຣະອົງທີ່ຈະໄວ້ຊີວິດຂອງພວກເຂົາ; ເຖິງ
ຢ່າງໃດກໍຕາມ ພວກເຂົາຍັງຕ້ອງທົນກັບ
ຄວາມເຈັບປວດຢ່າງໜັກໃນຈິດວິນຍານ
ເພາະຄວາມຊົ່ວຮ້າຍຂອງພວກເຂົາ ແລະ
ຢ້ານວ່າພວກເຂົາຈະຖືກປະຖິ້ມຕະຫລອດ
ໄປ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ວິງວອນບິດາຂອງພວກເຂົາຕັ້ງ
ຫລາຍມື້ ຂໍໃຫ້ພວກເຂົາຂຶ້ນໄປຫາແຜ່ນ
ດິນນີໄຟ.
6 ແລະ ກະສັດ ໂມ ໄຊ ຢາ ໄດ້ ທູນ ຖາມ
ພຣະຜູ້ເປັນເຈົ້າຖ້າຫາກວ່າເພິ່ນຄວນຈະ
ໃຫ້ພວກລູກຊາຍຂອງເພິ່ນຂຶ້ນໄປຫາບັນ
ດາຊາວເລມັນເພື່ອສັ່ງສອນພຣະຄຳຫລືບໍ່.
7 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບໂມ
ໄຊຢາວ່າ: ຈົ່ງໃຫ້ພວກເຂົາຂຶ້ນໄປເຖີດ,
ເພາະວ່າຫລາຍຄົນຈະເຊື່ອໃນຄຳເວົ້າ
ຂອງພວກເຂົາ, ແລະ ພວກເຂົາຈະມີຊີວິດ
ນິລັນດອນ; ແລະ ເຮົາຈະ ກປົດປ່ອຍພວກ
ລູກຊາຍຂອງເຈົ້າໃຫ້ພົ້ນຈາກກຳມືຂອງ
ຊາວເລມັນ.
8 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກະສັດໂມໄຊຢາໄດ້ອະນຸຍາດພວກເຂົາ
ເພື່ອຈະໄດ້ໄປ ແລະ ເຮັດຕາມຄຳເວົ້າຂອງ
ພວກເຂົາ.
9 ແລະ ພວກເຂົາໄດ້ ກອອກເດີນທາງໄປ
ໃນຖິ່ນແຫ້ງແລ້ງກັນດານ ເພື່ອຂຶ້ນໄປສັ່ງ
ສອນພຣະຄຳໃນບັນດາຊາວເລມັນ; ແລະ
ຂ້າພະເຈົ້າຈະໃຫ້ ຂເລື່ອງລາວເຖິງການປະ

1 ຂ ອມນ 1:12–13; ມຊຢ 9:1.
2 ກ ຢຄ 7:24.
3 ກ ແອວ 13:27; 3 ນຟ 17:14; ມຊ 7:41.
ຂ ຄມພ ຈິດວິນຍານ—ຄຸນຄ່າຂອງຈິດວິນຍານ.
ຄ ຢຄ 6:10; ຄພ 19:10–12.
4 ກ ມຊຢ 27:10.
ຂ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
7 ກ ແອວ 19:22–23.
9 ກ ແອວ 17:6–9.
ຂ ແອວ 17–26.

ຕິບັດຂອງພວກເຂົາໃນພາຍຫລັງ.
10 ບັດນີ້ກະສັດໂມໄຊຢາບໍ່ມີຜູ້ໃດທີ່ຈະ
ມອບ ລາຊາອານາ ຈັກໃຫ້ ເພາະບໍ່ ມີ ລູກ
ຊາຍຄົນໃດຂອງເພິ່ນທີ່ຍອມຮັບເອົາອານາ
ຈັກ.
11 ສະນັ້ນ ເພິ່ນຈຶ່ງໄດ້ເອົາບັນທຶກຊຶ່ງມີ
ຂຽນ ໄວ້ຢູ່ໃນ [ກ]ແຜ່ນ ຈາລຶກ ທອງ ເຫລືອງ
ມາ, ແລະ ແຜ່ນ ຈາລຶກຂອງນີໄຟ ນຳອີກ,
ແລະ ສິ່ງຂອງທັງໝົດທີ່ເພິ່ນໄດ້ປົກປັກຮັກ
ສາໄວ້ຕາມພຣະບັນ ຍັດຂອງ ພຣະເຈົ້າ,
ຫລັງຈາກໄດ້ແປ ແລະ ບັນທຶກສິ່ງທີ່ມີຢູ່ໃນ
[ຂ]ແຜ່ນ ຈາລຶກຄຳຊຶ່ງຜູ້ຄົນ ຂອງລິມໄຮໄດ້
ພົບພໍ້, ຊຶ່ງເພິ່ນໄດ້ຮັບ ຈາກມືຂອງລິມໄຮ
ເອງ;
12 ແລະ ການ ນີ້ ເພິ່ນ ເຮັດ ໄປ ເພາະ
ຄວາມ ເປັນ ຫ່ວງ ຫລາຍ ຂອງ ຜູ້ ຄົນ ຂອງ
ເພິ່ນ; ເພາະພວກ ເຂົາ ປາດ ຖະ ໜາ ເກີນ
ກວ່າຈະອັດແທກໄດ້ ທີ່ຈະຮູ້ກ່ຽວກັບຜູ້ຄົນ
ພວກນັ້ນຊຶ່ງຖືກທຳລາຍໄປແລ້ວ.
13 ແລະ ບັດນີ້ເພິ່ນໄດ້ແປແຜ່ນຈາລຶກ
ເຫລົ່ານັ້ນໂດຍອາໄສ [ກ]ຫີນສອງກ້ອນນັ້ນ
ຊຶ່ງຕິດຢູ່ກັບຂອບໂຄ້ງຄັນທະນູສອງຂ້າງ.
14 ບັດນີ້ຂອງເຫລົ່ານີ້ຖືກຕຽມໄວ້ແລ້ວ
ຕັ້ງແຕ່ຕົ້ນ, ແລະ ມອບໃຫ້ຕໍ່ໆກັນມາຈາກ
ລຸ້ນສູ່ລຸ້ນ, ເພື່ອຈຸດປະສົງໃນການແປພາ
ສາຕ່າງໆ;
15 ແລະ ຂອງເຫລົ່ານີ້ໄດ້ຖືກຮັກສາໄວ້
ໂດຍພຣະຫັດຂອງພຣະຜູ້ເປັນເຈົ້າ, ເພື່ອ
ພຣະອົງຈະໄດ້ເປີດເຜີຍໃຫ້ທຸກຄົນທີ່ເປັນ
ເຈົ້າຂອງແຜ່ນດິນຮູ້ຈັກເຖິງຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງຜູ້ຄົນຂອງ
ພຣະອົງ;
16 ແລະ ຜູ້ໃດກໍຕາມທີ່ມີສິ່ງຂອງເຫລົ່ານີ້
ຈະຖືກເອີ້ນວ່າ [ກ]ຜູ້ພະຍາກອນ, ຕາມການ
ເອີ້ນຂອງສະໄໝບູຮານ.
17 ບັດນີ້ຫລັງຈາກໂມໄຊຢາໄດ້ແປບັນ
ທຶກເຫລົ່ານັ້ນໝົດແລ້ວ, ຈົ່ງເບິ່ງ, ມັນໄດ້ໃຫ້
ເລື່ອງລາວຂອງຜູ້ຄົນທີ່ຖືກ [ກ]ທຳລາຍ, ນັບ
ຕັ້ງແຕ່ເວລາທີ່ພວກເຂົາຖືກທຳລາຍຄືນໄປ
ເຖິງການສ້າງ [ຂ]ຫໍສູງ,ໃຫຍ່ ອັນເປັນເວລາ
ທີ່ພຣະຜູ້ເປັນ ເຈົ້າເຮັດໃຫ້ພາສາຂອງຜູ້
ຄົນ [ຄ]ສັບສົນ, ແລະ ພວກເຂົາຈຶ່ງກະຈັດ
ກະຈາຍໄປຕາມພື້ນແຜ່ນດິນໂລກທັງໝົດ,
ແທ້ຈິງແລ້ວ, ແລະ ແມ່ນແຕ່ນັບຈາກນັ້ນ
ຄືນໄປເຖິງການສ້າງອາດາມ.
18 ບັດນີ້ ເລື່ອງລາວນີ້ໄດ້ເປັນເຫດໃຫ້
ຜູ້ຄົນ ຂອງ ໂມ ໄຊ ຢາ ເປັນ ທຸກຢ່າງໃຫຍ່
ຫລວງ, ແທ້ຈິງແລ້ວ, ພວກເຂົາເຕັມໄປ
ດ້ວຍຄວາມເສົ້າສະຫລົດໃຈ; ເຖິງຢ່າງໃດ
ກໍຕາມ, ມັນໄດ້ໃຫ້ຄວາມຮູ້ແກ່ພວກເຂົາ
ຢ່າງຫລວງຫລາຍ ຊຶ່ງໃນນັ້ນໄດ້ເຮັດໃຫ້
ພວກເຂົາມີຄວາມປິຕິຍິນດີ.
19 ແລະ ເລື່ອງລາວນີ້ຈະມີຂຽນໄວ້ພາຍ
ຫລັງ; ເພາະຈົ່ງເບິ່ງ, ມັນສົມຄວນທີ່ຜູ້ຄົນ
ທັງປວງຄວນຮູ້ເລື່ອງຊຶ່ງມີຂຽນຢູ່ໃນເລື່ອງ
ນັ້ນ.
20 ແລະ ບັດນີ້, ດັ່ງ ເຊັ່ນ ທີ່ ຂ້າ ພະ ເຈົ້າ
ໄດ້ ເວົ້າກັບ ທ່ານ ແລ້ວ, ຫລັງ ຈາກກະສັດ
ໂມໄຊຢາກະທຳສິ່ງເຫລົ່ານີ້ແລ້ວ, ເພິ່ນໄດ້
ເອົາແຜ່ນ ຈາລຶກ [ກ]ທອງເຫລືອງ ແລະ ສິ່ງ
ຂອງ ທັງໝົດຊຶ່ງເພິ່ນໄດ້ເກັບກຳໄວ້ມາ,
ແລ້ວມອບມັນໃຫ້ແອວມາ, ຜູ້ເປັນລູກຂອງ
ແອວມາ; ແທ້ຈິງ ແລ້ວ, ບັນທຶກ ທັງໝົດ
ແລະ [ຂ]ສິ່ງແປຄວາມໝາຍນຳອີກ, ແລະ ໄດ້

11 *ກ* ຄມພ ແຜ່ນຈາລຶກ ທອງເຫລືອງ.
*ຂ* ຄມພ ແຜ່ນຈາລຶກຄຳ.
13 *ກ* ຄມພ ອຸລີມ ແລະ ທຸມມີມ.
16 *ກ* ມຊຍ 8:13–18. ຄມພ ຜູ້ພະຍາກອນ.
17 *ກ* ມຊຍ 8:7–12.
*ຂ* ອທ 1:1–5.
*ຄ* ປຖກ 11:6–9.
20 *ກ* ແອວ 37:3–10.
*ຂ* ຄມພ ອຸລີມ ແລະ ທຸມມີມ.

ມອບສິ່ງທັງໝົດໃຫ້ລາວ, ແລະ ສັ່ງລາວວ່າ
ລາວຄວນເກັບກຳ ແລະ [ຄ]ຮັກສາມັນໄວ້ໃຫ້
ດີ, ແລະ ໃຫ້ເຮັດບັນທຶກກ່ຽວກັບຜູ້ຄົນໄວ້
ນຳອີກ, ໂດຍມອບໃຫ້ຕໍ່ໆກັນໄປຈາກຄົນ
ລຸ້ນໜຶ່ງຫາຄົນອີກລຸ້ນໜຶ່ງ, ດັ່ງເຊັ່ນທີ່ໄດ້
ມອບຕໍ່ໆກັນມາຕັ້ງແຕ່ເວລາທີ່ລີໄຮອອກ
ຈາກເຢຣູຊາເລັມ.

## ບົດທີ 29

*ໂມໄຊຢາສະເໜີໃຫ້ເລືອກຜູ້ຕັດສິນແທນ
ກະສັດ—ກະສັດທີ່ບໍ່ຊອບທຳຈະພາຜູ້ຄົນ
ຂອງຕົນເຂົ້າໄປໃນບາບ—ແອວມາຜູ້ເປັນ
ລູກໄດ້ຖືກເລືອກໃຫ້ເປັນຫົວໜ້າຜູ້ຕັດ
ສິນໂດຍສຽງຂອງປະຊາຊົນ—ເພິ່ນເປັນ
ມະຫາປະໂລຫິດດູແລສາດສະໜາຈັກນຳ
ອີກ—ແອວມາຜູ້ເປັນບິດາ ແລະ ໂມໄຊຢາ
ສິ້ນຊີວິດ. ປະມານ 92–91 ປີກ່ອນ ຄ.ສ.*

1 ບັດນີ້ ເມື່ອ ໂມ ໄຊຢາໄດ້ກະທຳສິ່ງ
ເຫລົ່ານີ້ແລ້ວ ເພິ່ນໄດ້ສອບຖາມໄປທົ່ວ
ແຜ່ນດິນໃນບັນດາຜູ້ຄົນທັງໝົດ, ໂດຍ
ຢາກຮູ້ເຖິງເຈດຕະນາຂອງພວກເຂົາວ່າຜູ້
ໃດຄວນເປັນກະສັດຂອງພວກເຂົາ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຽງ
ຂອງຜູ້ຄົນມີຄວາມວ່າ: ພວກຂ້ານ້ອຍຢາກ
ໃຫ້ອາໂຣນ ລູກຊາຍຂອງທ່ານເອງມາເປັນ
ກະສັດຂອງພວກຂ້ານ້ອຍ ແລະ ເປັນຜູ້ປົກ
ຄອງຂອງພວກຂ້ານ້ອຍ.
3 ບັດນີ້ອາໂຣນໄດ້ຂຶ້ນໄປຫາແຜ່ນດິນ
ນີໄຟແລ້ວ, ສະນັ້ນ ກະສັດຈຶ່ງບໍ່ສາມາດ
ມອບລາຊາອານາຈັກໃຫ້ລາວ; ທັງອາໂຣນ
ເອງກໍບໍ່ຍອມຮັບເອົາລາຊາອານາຈັກ; ທັງ
ບໍ່ມີ [ກ]ລູກຊາຍຄົນໃດຂອງໂມໄຊຢາຍອມ
ຮັບເອົາລາຊາອານາຈັກເລີຍ.
4 ສະນັ້ນ ກະສັດໂມໄຊຢາຈຶ່ງໄດ້ສອບ
ຖາມໄປໃນບັນດາຜູ້ຄົນອີກ; ແທ້ຈິງແລ້ວ,
ເພິ່ນໄດ້ສົ່ງຂໍ້ຄວາມທີ່ຂຽນໄວ້ໄປເຖິງບັນ
ດາຜູ້ຄົນ. ແລະ ນີ້ຄືຂໍ້ຄວາມທີ່ຂຽນໄວ້, ມີ
ຄວາມວ່າ:
5 ຈົ່ງເບິ່ງ, ໂອ້ ຜູ້ຄົນຂອງຂ້າພະເຈົ້າ, ຫລື
ພີ່ນ້ອງຂອງຂ້າພະເຈົ້າ, ເພາະຂ້າພະເຈົ້າຖື
ວ່າພວກທ່ານເປັນດັ່ງນັ້ນ, ແລະ ຂ້າພະເຈົ້າ
ປາດຖະໜາໃຫ້ພວກທ່ານພິຈາລະນາສາ
ເຫດທີ່ພວກທ່ານຖືກຂໍໃຫ້ພິຈາລະນາ—
ເພາະວ່າພວກທ່ານປາດຖະໜາຢາກມີ
[ກ]ກະສັດ.
6 ບັດນີ້ ຂ້າພະເຈົ້າປະກາດກັບພວກ
ທ່ານວ່າ ຜູ້ທີ່ເປັນເຈົ້າຂອງລາຊາອານາຈັກ
ນີ້ໂດຍສິດທິໄດ້ປະຕິເສດ, ແລະ ຈະບໍ່ຍອມ
ຮັບເອົາລາຊາອານາຈັກ.
7 ແລະ ບັດນີ້ຖ້າຫາກຈະແຕ່ງຕັ້ງຜູ້ອື່ນ
ແທນ, ຈົ່ງເບິ່ງ, ຂ້າພະເຈົ້າຢ້ານວ່າ ມັນຈະ
ເກີດການຜິດຖຽງກັນຂຶ້ນໃນບັນດາພວກ
ທ່ານ. ແລະ ຜູ້ໃດຈະຮູ້ໄດ້ວ່າລູກຊາຍຂອງ
ຂ້າພະເຈົ້າຜູ້ເປັນເຈົ້າຂອງລາຊາອານາຈັກ
ອາດຫັນມາຮ້າຍກາດຂຶ້ນ ແລະ ພາສ່ວນ
ໜຶ່ງຂອງຜູ້ຄົນພວກນີ້ໄປກັບລາວ, ຊຶ່ງຈະ
ເຮັດໃຫ້ເກີດສົງຄາມ ແລະ ການຂັດແຍ້ງ
ກັນຂຶ້ນໃນບັນດາພວກທ່ານ, ຊຶ່ງຈະເປັນ
ເຫດໃຫ້ມີການນອງເລືອດຢ່າງຫລວງ
ຫລາຍເກີດຂຶ້ນ ແລະ ບິດເບືອນທາງຂອງ
ພຣະຜູ້ເປັນເຈົ້າ, ແທ້ຈິງແລ້ວ, ແລະ ຈະ
ທຳລາຍຈິດວິນຍານຂອງຜູ້ຄົນຢ່າງຫລວງ
ຫລາຍ.
8 ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ
ໃຫ້ພວກເຮົາສະຫລາດ ແລະ ພິຈາລະນາ
ເລື່ອງເຫລົ່ານີ້, ເພາະວ່າພວກເຮົາບໍ່ມີສິດ
ຈະທຳລາຍລູກຊາຍຂອງຂ້າພະເຈົ້າ, ທັງ

20 *ຄ* ຄມພ ພຣະຄຳພີ—ພຣະ
ຄຳພີທີ່ຕ້ອງຮັກສາໄວ້.

**29** 3 *ກ* ມຊຢ 27:34.
5 *ກ* 1 ຊມອ 8:9–19.

ພວກເຮົາບໍ່ມີສິດໃດໆທີ່ຈະທຳລາຍຄົນອື່ນ
ຖ້າຫາກແຕ່ງຕັ້ງຜູ້ນັ້ນຂຶ້ນມາແທນລາວ.
9 ແລະ ຖ້າຫາກລູກຊາຍຂອງຂ້າພະເຈົ້າ
ຫັນກັບໄປສູ່ຄວາມທະນົງໃຈເຖິງເລື່ອງທີ່ບໍ່
ມີປະໂຫຍດຂອງລາວ, ລາວກໍຄົງຈະຈື່ໄດ້
ເຖິງຄຳເວົ້າຊຶ່ງລາວໄດ້ເວົ້າໄວ້ ແລະ ຈະ
ຮຽກຮ້ອງເອົາສິດທິຂອງລາວໃນລາຊາອາ
ນາຈັກນີ້ຄືນໄປ, ຊຶ່ງຈະເຮັດໃຫ້ລາວ ແລະ
ຜູ້ຄົນພວກນີ້ກະທຳບາບຫລາຍຂຶ້ນ.
10 ແລະ ບັດນີ້ໃຫ້ພວກເຮົາສະຫລາດ
ແລະ ຊອກຫາສິ່ງເຫລົ່ານີ້, ແລະ ສິ່ງທີ່ຈະ
ເຮັດໃຫ້ເກີດສັນຕິສຸກແກ່ຜູ້ຄົນພວກນີ້.
11 ສະນັ້ນ ຂ້າພະເຈົ້າຈະເປັນກະສັດ
ຂອງພວກທ່ານໃນວັນເວລາທີ່ເຫລືອຢູ່
ຂອງຂ້າພະເຈົ້າ; ເຖິງຢ່າງໃດກໍຕາມ, ໃຫ້
ພວກເຮົາ [ກ]ແຕ່ງຕັ້ງ [ຂ]ຜູ້ຕັດສິນເພື່ອຕັດສິນ
ຜູ້ຄົນພວກນີ້ຕາມກົດຂອງພວກເຂົາ; ແລະ
ພວກເຮົາຈະຈັດລະບຽບການງານໃໝ່ຂອງ
ຜູ້ຄົນພວກນີ້, ເພາະວ່າພວກເຮົາຈະແຕ່ງ
ຕັ້ງຜູ້ທີ່ມີສະຕິປັນຍາໃຫ້ເປັນຜູ້ຕັດສິນ, ຊຶ່ງ
ຈະຕັດສິນຜູ້ຄົນພວກນີ້ຕາມພຣະບັນຍັດ
ຂອງພຣະເຈົ້າ.
12 ບັດນີ້ຖ້າຫາກມະນຸດຖືກພຣະເຈົ້າຕັດ
ສິນຍັງຈະດີກວ່າທີ່ຈະໃຫ້ມະນຸດທຳມະດາ
ຕັດສິນແມ່ນບໍ, ເພາະວ່າການພິພາກສາ
ຂອງພຣະເຈົ້າທ່ຽງທຳສະເໝີໄປ, ແຕ່ການ
ຕັດສິນຂອງມະນຸດນັ້ນບໍ່ທ່ຽງທຳສະເໝີໄປ.
13 ສະນັ້ນ, ຖ້າຫາກເປັນໄປວ່າ ພວກ
ທ່ານຈະມີຄົນ [ກ]ຊອບທຳມາເປັນກະສັດ
ຂອງພວກທ່ານ ຊຶ່ງຈະສະຖາປະນາກົດ
ຂອງພຣະເຈົ້າ ແລະ ຕັດສິນຜູ້ຄົນພວກ
ນີ້ຕາມພຣະບັນຍັດຂອງພຣະອົງ, ແທ້ຈິງ
ແລ້ວ, ຖ້າຫາກພວກທ່ານຈະມີຄົນມາເປັນ
ກະສັດຂອງພວກທ່ານ ຜູ້ຈະເຮັດເພື່ອຜູ້
ຄົນພວກນີ້ເໝືອນດັ່ງທີ່ [ຂ]ເບັນຢາມິນບິດາ
ຂອງຂ້າພະເຈົ້າໄດ້ເຮັດມາ—ຂ້າພະເຈົ້າ
ກ່າວກັບພວກທ່ານວ່າ, ຖ້າຫາກເລື່ອງມັນ
ຈະເປັນໄປໄດ້ແບບນີ້ສະເໝີໄປແລ້ວ ມັນກໍ
ສົມຄວນທີ່ພວກທ່ານຈະມີກະສັດປົກຄອງ
ພວກທ່ານຢູ່ສະເໝີ.
14 ແລະ ແມ່ນແຕ່ຕົວຂ້າພະເຈົ້າເອງ
ກໍຍັງໄດ້ທຳງານຈົນສຸດກຳລັງ ແລະ ສຸດ
ຄວາມສາມາດຊຶ່ງຂ້າພະເຈົ້າມີຢູ່, ເພື່ອສິດ
ສອນພຣະບັນຍັດຂອງພຣະເຈົ້າໃຫ້ແກ່
ພວກທ່ານ, ແລະ ເພື່ອສະຖາປະນາສັນຕິ
ສຸກຂຶ້ນທົ່ວແຜ່ນດິນ, ເພື່ອບໍ່ໃຫ້ມີສົງຄາມ
ແລະ ການຂັດແຍ້ງກັນ, ບໍ່ໃຫ້ມີການຂີ້ລັກ
ມັກສົກ, ຫລື ການປຸ້ນຈີ້, ຫລື ການຄາດຕະ
ກຳ ຫລື ຄວາມຊົ່ວຮ້າຍນາໆປະການ;
15 ແລະ ຜູ້ໃດກໍຕາມທີ່ເຮັດຄວາມຊົ່ວ
ຮ້າຍນີ້, ຂ້າພະເຈົ້າກໍຈະໄດ້ [ກ]ລົງໂທດເຂົາ
ຕາມກົດ ຊຶ່ງບັນພະບຸລຸດຂອງພວກເຮົາໄດ້
ມອບໃຫ້ພວກເຮົາ.
16 ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານ
ວ່າ ເພາະວ່າມະນຸດບໍ່ມີຄວາມທ່ຽງທຳທຸກ
ຄົນ ຈຶ່ງບໍ່ສົມຄວນທີ່ພວກທ່ານຈະມີກະສັດ
ຄົນໜຶ່ງ ຫລື ກະສັດຫລາຍຄົນປົກຄອງ
ພວກທ່ານ.
17 ເພາະຈົ່ງເບິ່ງ, ກະສັດ [ກ]ຊົ່ວຄົນໜຶ່ງ
ເຮັດໃຫ້ [ຂ]ຄວາມຊົ່ວຮ້າຍເກີດຂຶ້ນໄດ້
ຫລາຍປານໃດ, ແທ້ຈິງແລ້ວ, ເປັນຄວາມ
ພິນາດອັນໃຫຍ່ຫລວງພຽງໃດ!
18 ແທ້ຈິງແລ້ວ, ໃຫ້ສຳນຶກເຖິງກະສັດ
ໂນອາ, [ກ]ຄວາມຊົ່ວຮ້າຍຂອງເພິ່ນ ແລະ
ຄວາມໜ້າກຽດຊັງຂອງເພິ່ນ, ແລະ ຄວາມ
ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງຜູ້

11 ກ ມຊຢ 29:25–27.
ຂ ອພຍ 18:13–24.
13 ກ ມຊຢ 23:8, 13–14.
ຂ ຄມ 1:17–18.
15 ກ ແອວ 1:32–33.
17 ກ ມຊຢ 23:7–9.
ຂ ແອວ 46:9–10.
18 ກ ມຊຢ 11:1–15.

ຄົນຂອງເພິ່ນນຳອີກ. ຈົ່ງເບິ່ງ ຄວາມພິນາດ
ອັນໃຫຍ່ຫລວງໄດ້ເກີດກັບພວກເຂົາແລ້ວ;
ແລະ ເພາະຄວາມຊົ່ວຮ້າຍຂອງພວກເຂົາ,
ພວກເຂົາຈຶ່ງໄດ້ຖືກເອົາໄປເປັນ [ຂ]ທາດ.
19 ແລະ ຖ້າຫາກບໍ່ມີການຫຍຸ້ງກ່ຽວຂອງ
ພຣະຜູ້ສ້າງຜູ້ມີສະຕິປັນຍາຂອງພວກເຂົາ
ແລ້ວ, ແລະ ຖ້າບໍ່ແມ່ນຍ້ອນການກັບໃຈ
ຢ່າງແທ້ຈິງຂອງພວກເຂົາແລ້ວ, ພວກເຂົາ
ຈະຕ້ອງຢູ່ໃນຄວາມເປັນທາດຈົນເຖິງບັດນີ້
ຢ່າງບໍ່ມີທາງຫລີກລ້ຽງໄດ້.
20 ແຕ່ ຈົ່ງ ເບິ່ງ, ພຣະ ອົງ ໄດ້ ປົດ ປ່ອຍ
ພວກ ເຂົາ ເພາະ ວ່າ ພວກ ເຂົາ ໄດ້ [ກ]ຖ່ອມ
ຕົວຕໍ່ພຣະພັກຂອງພຣະອົງ; ແລະ ເພາະ
ວ່າພວກເຂົາ [ຂ]ທູນຂໍຢ່າງສຸດກຳລັງຕໍ່ພຣະ
ອົງ, ພຣະ ອົງ ຈຶ່ງ ໄດ້ ປົດ ປ່ອຍ ພວກ ເຂົາ
ອອກຈາກຄວາມເປັນທາດ; ແລະ ເພາະ
ສະນັ້ນ ພຣະ ຜູ້ ເປັນ ເຈົ້າ ຈຶ່ງ ກະ ທຳ ດ້ວຍ
ອຳນາດຂອງພຣະອົງໃນທຸກກໍລະນີໃນບັນ
ດາລູກຫລານມະນຸດ, ໂດຍເດ່ພຣະຫັດ
ແຫ່ງ [ຄ]ຄວາມເມດຕາມາຍັງຜູ້ທີ່ [ງ]ໄວ້ວາງ
ໃຈໃນພຣະອົງ.
21 ແລະ ຈົ່ງເບິ່ງ, ບັດນີ້ຂ້າພະເຈົ້າກ່າວ
ກັບ ພວກ ທ່ານ ວ່າ, ພວກທ່ານຈະກຳຈັດ
ກະສັດຊົ່ວຮ້າຍຜູ້ໜຶ່ງອອກຈາກບັນລັງບໍ່
ໄດ້ນອກຈາກຈະເປັນການຂັດແຍ້ງຢ່າງ
ໜັກ ແລະ ການນອງເລືອດຢ່າງຫລວງ
ຫລາຍ.
22 ເພາະ ຈົ່ງ ເບິ່ງ, ໃນ ຄວາມ ຊົ່ວ ຮ້າຍ
ກະສັດກໍຍັງມີ [ກ]ໝູ່ເພື່ອນ, ແລະ ເພິ່ນຈະ
ຈັດເສນາອາມາດໄວ້ອ້ອມຮອບເພິ່ນ; ແລະ
ເພິ່ນຈະທຳລາຍກົດຂອງຄົນທີ່ປົກຄອງມາ
ໃນຄວາມຊອບທຳກ່ອນເພິ່ນ; ແລະ ເພິ່ນ
ຈະຢຽບຢ່ຳພຣະບັນຍັດຂອງພຣະເຈົ້າໄວ້
ໃຕ້ຕີນຂອງເພິ່ນ;
23 ແລະ ເພິ່ນຈະອອກກົດໃໝ່ ແລະ ສົ່ງ
ອອກໄປໃນບັນດາຜູ້ຄົນຂອງເພິ່ນ, ແທ້
ຈິງແລ້ວ, ແມ່ນແຕ່ກົດຕາມວິທີການແຫ່ງ
[ກ]ຄວາມຊົ່ວຮ້າຍຂອງເພິ່ນເອງ; ແລະ ຜູ້ໃດ
ກໍຕາມທີ່ບໍ່ເຮັດຕາມກົດຂອງເພິ່ນ, ເພິ່ນກໍ
ຈະທຳລາຍຜູ້ນັ້ນເສຍ; ແລະ ຜູ້ໃດກໍຕາມ
ທີ່ກະບົດຕໍ່ເພິ່ນ, ເພິ່ນກໍຈະສົ່ງກອງທັບໄປ
ປາບຜູ້ນັ້ນ; ແລະ ຖ້າຫາກເພິ່ນເຮັດໄດ້,
ເພິ່ນຈະທຳລາຍເຂົາເສຍ, ແລະ ດັ່ງນັ້ນ
ກະສັດທີ່ບໍ່ຊອບທຳຈຶ່ງບິດເບືອນທາງແຫ່ງ
ຄວາມຊອບທຳທັງໝົດ.
24 ແລະ ບັດນີ້ຈົ່ງເບິ່ງ ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ, ບໍ່ສົມຄວນເລີຍທີ່ຄວາມ
ໜ້າກຽດຊັງເຊັ່ນນັ້ນຈະເກີດກັບພວກທ່ານ.
25 ສະນັ້ນ, ພວກທ່ານຈົ່ງເລືອກເອົາຜູ້
ຕັດສິນໂດຍສຽງຂອງຜູ້ຄົນພວກນີ້ ເພື່ອ
ພວກທ່ານຈະໄດ້ຮັບການຕັດສິນຕາມກົດ
ຊຶ່ງບັນພະບຸລຸດຂອງພວກເຮົາໄດ້ໃຫ້ໄວ້
ກັບພວກທ່ານ ຊຶ່ງຖືກຕ້ອງ, ແລະ ຊຶ່ງໄດ້ໃຫ້
ໄວ້ກັບພວກທ່ານໂດຍພຣະຫັດຂອງພຣະ
ຜູ້ເປັນເຈົ້າ.
26 ບັດນີ້ບໍ່ແມ່ນເລື່ອງທຳມະດາທີ່ສຽງ
ຜູ້ຄົນຈະປາດຖະໜາສິ່ງກົງກັນຂ້າມກັບ
ສິ່ງທີ່ຖືກຕ້ອງ, ແຕ່ເປັນເລື່ອງທຳມະດາ
ສຳລັບຄົນສ່ວນໜ້ອຍທີ່ປາດຖະໜາສິ່ງ
ທີ່ບໍ່ຖືກຕ້ອງ; ສະນັ້ນ ເລື່ອງນີ້ພວກທ່ານ
ຈົ່ງຍຶດຖື ແລະ ເຮັດໃຫ້ເປັນກົດຂອງພວກ
ທ່ານ—ທີ່ຈະຈັດທຸລະກິດຂອງພວກທ່ານ

18 *ຂ* 1 ຊມອ 8:10–18; ມຊຢ 12:1–8; ອທ 6:22–23.
20 *ກ* ມຊຢ 21:13–15.
*ຂ* ອພຍ 2:23–25; ແອວ 43:49–50.
*ຄ* ອຊກ 33:11, 15–16; ມຊຢ 26:30.
*ງ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
22 *ກ* 1 ກສ 12:8–14.
23 *ກ* ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.

ໂດຍສຽງຂອງຜູ້ຄົນ.
27 ແລະ [ກ]ຖ້າ ຫາກ ເວລາ ມາ ເຖິງ ເມື່ອ
ສຽງຂອງຜູ້ຄົນເລືອກເອົາຄວາມຊົ່ວຮ້າຍ,
ເມື່ອນນັ້ນກໍເປັນເວລາທີ່ການ ພິພາກສາ
ຂອງພຣະເຈົ້າຈະເກີດກັບພວກທ່ານ; ແທ້
ຈິງແລ້ວ, ເມື່ອນັ້ນ ຈະເປັນເວລາທີ່ພຣະອົງ
ຈະສະເດັດມາຢ້ຽມຢາມພວກທ່ານດ້ວຍ
ຄວາມພິນາດອັນແສນສາຫັດດັ່ງທີ່ພຣະອົງ
ເຄີຍສະເດັດມາຢ້ຽມຢາມແຜ່ນດິນນີ້.
28 ແລະ ບັດນີ້ຖ້າຫາກພວກທ່ານມີຜູ້
ຕັດສິນ, ແລະ ພວກເພິ່ນບໍ່ຕັດສິນພວກ
ທ່ານຕາມກົດຊຶ່ງມີໄວ້ໃຫ້ແລ້ວ, ພວກທ່ານ
ກໍອາດຈະໃຫ້ພວກເພິ່ນໄດ້ຮັບການຕັດສິນ
ຈາກສານທີ່ສູງກວ່ານັ້ນ.
29 ແລະ ຖ້າ ຫາກຜູ້ຕັດສິນຂອງພວກ
ທ່ານທີ່ສູງກວ່າບໍ່ ໃຫ້ການຕັດສິນທີ່ຖືກ
ຕ້ອງ, ແລ້ວພວກທ່ານຄວນຈະຫາຜູ້ຕັດ
ສິນຫລາຍຄົນທີ່ຕ່ຳກວ່າຂອງພວກທ່ານມາ
ເຕົ້າໂຮມກັນ, ແລະ ພວກເພິ່ນຈະຕັດສິນຜູ້
ຕັດສິນທີ່ສູງກວ່າຂອງພວກທ່ານຕາມສຽງ
ຂອງປະຊາຊົນ.
30 ແລະ ເຮົາ ສັ່ງ ໃຫ້ ພວກ ທ່ານ ເຮັດ
ແນວ ນີ້ ດ້ວຍ ຄວາມຢ້ານກົວພຣະຜູ້ເປັນ
ເຈົ້າ; ແລະ ເຮົາສັ່ງໃຫ້ພວກທ່ານເຮັດສິ່ງ
ເຫລົ່ານີ້, ແລະ ບໍ່ໃຫ້ມີກະສັດ; ຄືຖ້າຫາກ
ຄົນພວກນີ້ເຮັດບາບ ແລະ ຄວາມຊົ່ວຮ້າຍ
ແລ້ວພວກເຂົາຈະໄດ້ຮັບຄຳຕອບໄວ້ເທິງ
ຫົວຂອງພວກເຂົາເອງ.
31 ເພາະຈົ່ງເບິ່ງ ເຮົາກ່າວກັບພວກທ່ານ
ວ່າ, ບາບຂອງຄົນຢ່າງຫລວງຫລາຍເກີດ
ຂຶ້ນຍ້ອນຄວາມຊົ່ວຮ້າຍຂອງກະສັດຂອງ
ພວກເຂົາ; ສະນັ້ນ ຄວາມຊົ່ວຮ້າຍຂອງ
ພວກເຂົາຍ່ອມໄດ້ຮັບຄຳຕອບໄວ້ເທິງຫົວ
ຂອງກະສັດຂອງພວກເຂົາ.
32 ແລະ ບັດ ນີ້ ເຮົາ ປາດ ຖະ ໜາ ວ່າ
[ກ]ຄວາມບໍ່ສະເໝີພາບຈະບໍ່ມີອີກຕໍ່ໄປໃນ
ແຜ່ນດິນນີ້, ໂດຍສະເພາະ ໃນບັນດາຜູ້ຄົນ
ຂອງຂ້າພະເຈົ້າເອງ; ແຕ່ຂ້າພະເຈົ້າປາດ
ຖະໜາໃຫ້ແຜ່ນດິນນີ້ເປັນແຜ່ນດິນ [ຂ]ແຫ່ງ
ເສລີພາບ, ແລະ [ຄ]ທຸກໆຄົນຈະຊື່ນຊົມໃນ
ສິດ ແລະ ສິດທິພິເສດເທົ່າທຽມກັນຕາບໃດ
ທີ່ພຣະຜູ້ເປັນເຈົ້າເຫັນສົມຄວນທີ່ພວກເຮົາ
ຈະດຳລົງຊີວິດຢູ່ ແລະ ຮັບແຜ່ນດິນເປັນ
ມູນມໍລະດົກ, ແທ້ຈິງແລ້ວ, ຕາບໃດທີ່ລູກ
ຫລານຄົນໃດຂອງພວກເຮົາຍັງເຫລືອຢູ່ໃນ
ແຜ່ນດິນນີ້.
33 ແລະ ກະສັດ ໂມ ໄຊ ຢາ ໄດ້ ຂຽນ ອີກ
ຫລາຍ ເລື່ອງ ໄປ ເຖິງພວກເຂົາ, ໂດຍໄດ້
ເປີດເຜີຍໃຫ້ຮູ້ເຖິງຄວາມເດືອດຮ້ອນ ແລະ
ຄວາມຫຍຸ້ງຍາກຂອງກະສັດທີ່ຊອບທຳ,
ແທ້ຈິງແລ້ວ, ຄວາມເຈັບປວດຂອງຈິດວິນ
ຍານ ເພື່ອຜູ້ຄົນຂອງຕົນ ນັ້ນ, ແລະ ການ
ຈົ່ມວ່າທັງໝົດຂອງຜູ້ຄົນທີ່ມີຕໍ່ກະສັດຂອງ
ພວກເຂົານຳອີກ; ແລະ ເພິ່ນໄດ້ອະທິບາຍ
ເລື່ອງທັງໝົດນີ້ໃຫ້ພວກເຂົາຟັງ.
34 ແລະ ເພິ່ນ ໄດ້ ບອກພວກເຂົາວ່າ
ເລື່ອງເຫລົ່ານີ້ບໍ່ຄວນຈະເກີດຂຶ້ນ; ແຕ່ວ່າ
ພາລະແບກຫາບຄວນຈະເກີດຂຶ້ນກັບທຸກ
ຄົນເພື່ອມະນຸດທຸກໆຄົນຈະໄດ້ຮັບສ່ວນ
ແບ່ງຂອງຕົນ.
35 ແລະ ເພິ່ນໄດ້ເປີດເຜີຍໃຫ້ພວກເຂົາ
ຮູ້ຈັກການເສຍປຽບທັງໝົດຂອງວຽກງານ
ທີ່ພວກເຂົາເຮັດໄປນັ້ນນຳອີກ, ໂດຍມີ
ກະສັດທີ່ບໍ່ຊອບທຳປົກຄອງພວກເຂົາ;
36 ແທ້ຈິງແລ້ວ, ຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງທັງໝົດຂອງເພິ່ນ, ແລະ
ສົງຄາມທັງໝົດ, ແລະ ການຂັດແຍ້ງ,
ແລະ ການນອງເລືອດ, ແລະ ການລັກ,

27 *ກ* ແອວ 10:19.
32 *ກ* ແອວ 30:11.
*ຂ* 2 ນຟ 1:7; 10:11.
ຄມພ ເສລີພາບ.
*ຄ* ແອວ 27:9.

ແລະ ການປຸ້ນຈີ້, ແລະ ການທຳການໂສ
ເພນີ, ແລະ ຄວາມຊົ່ວຮ້າຍນາໆປະການ
ຊຶ່ງບໍ່ສາມາດຍົກຂຶ້ນມາເວົ້າໃຫ້ໝົດໄດ້—
ບອກພວກເຂົາວ່າສິ່ງເຫລົ່ານີ້ບໍ່ຄວນຈະມີ
ຂຶ້ນເລີຍ, ເພາະມັນກົງກັນຂ້າມຢ່າງເຫັນ
ໄດ້ຢ່າງແຈ້ງຊັດກັບພຣະບັນຍັດຂອງພຣະ
ເຈົ້າ.
37 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື, ຫລັງຈາກໂມໄຊຢາໄດ້ສົ່ງເລື່ອງເຫລົ່າ
ນີ້ອອກໄປຫາບັນດາຜູ້ຄົນແລ້ວ ຄົນທັງ
ຫລາຍຈຶ່ງແນ່ໃຈເຖິງຄວາມຈິງຈາກຄຳເວົ້າ
ຂອງເພິ່ນ.
38 ສະນັ້ນ ພວກເຂົາຈຶ່ງເລີກລົ້ມຄວາມ
ປາດຖະໜາທີ່ຈະມີກະສັດ, ແລະ ກັບມາ
ກະຕືລືລົ້ນຢ່າງຍິ່ງທີ່ຈະໃຫ້ທຸກຄົນມີໂອ
ກາດເທົ່າທຽມກັນຕະຫລອດທົ່ວແຜ່ນດິນ;
ແທ້ຈິງແລ້ວ, ແລະ ທຸກຄົນສະແດງຄວາມ
ເຕັມໃຈທີ່ຈະຮັບເອົາບາບຂອງຕົນເອງ.
39 ສະນັ້ນ, ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນເຫລົ່ານັ້ນໄດ້ມາເຕົ້າໂຮມກັນເປັນກຸ່ມໆ
ຕະຫລອດທົ່ວແຜ່ນດິນ, ເພື່ອອອກສຽງ
ຂອງຕົນເອງກ່ຽວກັບວ່າ ຜູ້ໃດຄວນເປັນ
ຜູ້ຕັດສິນຂອງພວກເຂົາທີ່ຈະຕັດສິນຕາມ
[ກ]ກົດຊຶ່ງມີໃຫ້ໄວ້ກັບພວກເຂົາ; ແລະ ພວກ
ເຂົາມີຄວາມປິຕິຍິນດີຢ່າງຍິ່ງໃນ [ຂ]ເສລີ
ພາບທີ່ພວກເຂົາໄດ້ຮັບມາ.
40 ແລະ ພວກເຂົາມີຄວາມຮັກແພງ
ຫລາຍຂຶ້ນຕໍ່ໂມໄຊຢາ; ແທ້ຈິງແລ້ວ, ພວກ
ເຂົານັບຖືເພິ່ນຫລາຍກວ່າຄົນອື່ນໆ; ເພາະ
ພວກເຂົາເຫັນວ່າເພິ່ນບໍ່ເປັນຄົນກົດຂີ່ຂົ່ມ
ເຫັງ ຊຶ່ງສະແຫວງຫາຜົນປະໂຫຍດສ່ວນ
ຕົວ, ແທ້ຈິງແລ້ວ, ສະແຫວງຫາຊັບສິນ
ຊຶ່ງເຮັດໃຫ້ຈິດວິນຍານເສື່ອມໂຊມ; ເພາະ
ເພິ່ນບໍ່ໄດ້ຮຽກຮ້ອງເອົາຂອງມີຄ່າຈາກ
ພວກເຂົາເລີຍ, ທັງບໍ່ໄດ້ເບີກບານໃນການ
ນອງເລືອດ; ແຕ່ເພິ່ນໄດ້ສະຖາປະນາ [ກ]ສັນ
ຕິສຸກຂຶ້ນໃນແຜ່ນດິນ, ແລະ ເພິ່ນໄດ້ໃຫ້
ຜູ້ຄົນຂອງເພິ່ນໄດ້ຮັບການປົດປ່ອຍຈາກ
ຄວາມເປັນທາດທຸກຢ່າງ; ສະນັ້ນ ພວກ
ເຂົາຈຶ່ງນັບຖືເພິ່ນຢ່າງລົ້ນເຫລືອ, ແທ້ຈິງ
ແລ້ວ, ເກີນກວ່າທີ່ຈະວັດແທກໄດ້.
41 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ແຕ່ງຕັ້ງ [ກ]ຜູ້ຕັດສິນເພື່ອປົກ
ຄອງພວກເຂົາ, ຫລື ວ່າຜູ້ຕັດສິນພວກ
ເຂົາຕາມກົດ; ແລະ ສິ່ງນີ້ພວກເຂົາໄດ້ເຮັດ
ຕະຫລອດທົ່ວແຜ່ນດິນ.
42 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າ
ຜູ້ຕັດສິນຄົນທຳອິດ, ເພິ່ນໄດ້ເປັນມະຫາ
ປະໂລຫິດນຳອີກ, ບິດາຂອງເພິ່ນໄດ້ມອບ
ຕຳແໜ່ງໃຫ້ເພິ່ນ ແລະ ມອບໜ້າທີ່ຮັບຜິດ
ຊອບກ່ຽວກັບ ການງານທັງໝົດຂອງສາດ
ສະໜາຈັກໃຫ້ເພິ່ນ.
43 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ແອວມາໄດ້ [ກ]ເດີນໃນທາງຂອງພຣະຜູ້
ເປັນເຈົ້າ, ແລະ ເພິ່ນໄດ້ຮັກສາພຣະບັນຍັດ
ຂອງພຣະອົງ, ແລະ ເພິ່ນໄດ້ຕັດສິນດ້ວຍ
ການຕັດສິນອັນຖືກຕ້ອງ; ແລະ ມັນມີສັນຕິ
ສຸກຕິດຕໍ່ກັນທົ່ວແຜ່ນດິນ.
44 ແລະ ສະນັ້ນການປົກຄອງຂອງຜູ້ຕັດ
ສິນຕະຫລອດທົ່ວແຜ່ນດິນເຊຣາເຮັມລາ
ຈຶ່ງເລີ່ມມີຂຶ້ນໃນບັນດາຜູ້ຄົນທັງໝົດທີ່ມີຊື່
ວ່າ ຊາວນີໄຟ; ແລະ ແອວມາເປັນຜູ້ຕັດສິນ
ຄົນທຳອິດ ແລະ ເປັນຫົວໜ້າ.
45 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ບິດາຂອງເພິ່ນໄດ້ສິ້ນຊີວິດເມື່ອມີອາຍຸ

39 *ກ* ແອວ 1:14.
*ຂ* ຄມພ ເສລີພາບ.
40 *ກ* ຄມພ ຄົນທີ່ສ້າງຄວາມສະຫງົບສຸກ.
41 *ກ* ມຊຢ 29:11.
43 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.

ໄດ້ແປດສິບສອງປີ, ໂດຍມີຊີວິດເພື່ອເຮັດ
ໃຫ້ພຣະບັນຍັດຂອງພຣະເຈົ້າບັນລຸຜົນສຳ
ເລັດ.
46 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໄຊຢາກໍໄດ້ສິ້ນຊີວິດໄປຄືກັນໃນປີທີສາມ
ສິບສາມແຫ່ງການປົກຄອງຂອງເພິ່ນ, ຊຶ່ງມີ
ອາຍຸໄດ້ [ກ]ຫົກສິບສາມປີ; ນັບເປັນເວລາທັງ
ໝົດຫ້າຮ້ອຍເກົ້າປີນັບຕັ້ງແຕ່ເວລາທີ່ລີໄຮ
ອອກຈາກເຢຣູຊາເລັມມາ.
47 ແລະ ດັ່ງນັ້ນ ການ ປົກ ຄອງ ຂອງ
ກະສັດເພື່ອດູແລຜູ້ຄົນຂອງນີໄຟຈຶ່ງໝົດ
ໄປ; ແລະ ດັ່ງນັ້ນວັນເວລາຂອງແອວມາ
ຜູ້ສ້າງຕັ້ງຮາກຖານຂອງສາດສະໜາຈັກກໍ
ໝົດໄປເຊັ່ນດຽວກັນ.

# ໜັງສືແອວມາ

**ລູກຊາຍຂອງແອວມາ**

ເລື່ອງລາວຂອງແອວມາ, ຜູ້ເປັນລູກຊາຍຂອງແອວມາ, ຜູ້ເປັນຫົວໜ້າຜູ້ຕັດສິນຄົນທຳອິດຂອງຜູ້ຄົນຂອງນີໄຟ, ແລະ ທັງເປັນມະຫາປະໂລຫິດດູແລສາດສະໜາຈັກນຳອີກ. ເລື່ອງລາວກ່ຽວກັບການປົກຄອງຂອງຜູ້ຕັດສິນ, ແລະ ສົງຄາມ ແລະ ການຂັດແຍ້ງໃນບັນດາຜູ້ຄົນ. ແລະ ເລື່ອງລາວຕ່າງໆກ່ຽວກັບສົງຄາມລະຫວ່າງຊາວນີໄຟກັບຊາວເລມັນນຳອີກ, ຊຶ່ງເປັນໄປຕາມບັນທຶກຂອງແອວມາ, ຜູ້ເປັນຫົວໜ້າຜູ້ຕັດສິນຄົນທຳອິດ.

## ບົດທີ 1

*ນີຮໍສິດສອນຄຳສອນທີ່ຜິດ, ສະຖາປະນາສາດສະໜາຈັກຂຶ້ນ, ແນະນຳການຫລອກລວງຂອງປະໂລຫິດ, ແລະ ຂ້າກີເດໂອນ—ນີຮໍຖືກປະຫານຊີວິດຕາມໂທດຂອງຄວາມຜິດຂອງລາວ—ການຫລອກລວງຂອງປະໂລຫິດ ແລະ ການກົດຂີ່ຂົ່ມເຫັງແຜ່ຂະຫຍາຍອອກໄປໃນບັນດາຜູ້ຄົນ—ພວກປະໂລຫິດທັງຫລາຍທຳງານຫາລ້ຽງຕົນເອງ, ຜູ້ຄົນເບິ່ງແຍງຄົນຍາກຈົນ, ແລະ ສາດສະໜາຈັກຈະເລີນຮຸ່ງເຮືອງຂຶ້ນ. ປະມານ 91–88 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ໃນປີ
ທຳອິດແຫ່ງການປົກຄອງຂອງຜູ້ຕັດສິນດູ
ແລຜູ້ຄົນຂອງນີໄຟ, ນັບຈາກເວລານີ້ໄປ
ກະສັດໂມໄຊຢາໄດ້ [ກ]ຈາກໄປຕາມທາງ
ຂອງໂລກແລ້ວ, ຊຶ່ງເພິ່ນໄດ້ຕໍ່ສູ້ມາຢ່າງອົດ
ທົນ, ເດີນໄປຢ່າງພາກພູມໃຈຕໍ່ພຣະພັກ
ຂອງພຣະເຈົ້າ, ບໍ່ມີຜູ້ໃດຈະຂຶ້ນປົກຄອງ
ແທນເພິ່ນເລີຍ; ເຖິງຢ່າງໃດກໍຕາມ ເພິ່ນ
ຍັງໄດ້ສະຖາປະນາ [ຂ]ກົດຂຶ້ນ ແລະ ຜູ້ຄົນ
ກໍຍອມຮັບເອົາກົດເຫລົ່ານັ້ນ; ສະນັ້ນ ພວກ
ເຂົາຈຶ່ງຕ້ອງປະຕິບັດຕາມກົດຊຶ່ງເພິ່ນໄດ້
ຕັ້ງໄວ້ໃຫ້.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີ
ທຳອິດຂອງການປົກຄອງຂອງແອວມາໃນ
ບັນລັງຕັດສິນນັ້ນ, ມີຄົນຜູ້ໜຶ່ງຖືກນຳເອົາ

46 *ກ* ມຊຢ 6:4.

[ແອວມາ]
**1** 1 *ກ* ມຊຢ 29:46.
*ຂ* ຈຣ 1:5; ແອວ 4:16; ຮລມ 4:22.

ມາຢູ່ຕໍ່ໜ້າເພິ່ນເພື່ອຮັບການຕັດສິນ, [ກ]ຊາຍ
ຄົນນີ້ເປັນຄົນທີ່ມີຮ່າງກາຍສູງໃຫຍ່ ແລະ ມີ
ຊື່ສຽງເພາະຄວາມແຂງແຮງຂອງລາວ.

3 ແລະ ລາວໄດ້ທ່ອງທ່ຽວໄປໃນບັນດາ
ຜູ້ຄົນ ແລະ ໄດ້ສັ່ງສອນຄົນທັງຫລາຍເຖິງ
ເລື່ອງທີ່ລາວ [ກ]ຖືວ່າເປັນພຣະຄຳຂອງພຣະ
ເຈົ້າ, ກ່າວຄຳ [ຂ]ຕໍ່ຕ້ານສາດສະໜາຈັກ;
ປະກາດແກ່ຜູ້ຄົນວ່າ ປະໂລຫິດກັບຜູ້ສອນ
ທຸກຄົນຄວນເປັນທີ່ [ຄ]ເຄົາລົບນັບຖື ແລະ
ພວກເພິ່ນ [ງ]ບໍ່ຄວນອອກແຮງງານດ້ວຍມື
ຂອງຕົນເອງ, ແຕ່ວ່າພວກເພິ່ນຄວນໄດ້ຮັບ
ການຄ້ຳຊູຈາກຜູ້ຄົນ.

4 ແລະ ລາວໄດ້ສະແດງຫລັກຖານຕໍ່ຜູ້
ຄົນອີກວ່າ ມະນຸດຊາດທັງປວງຈະລອດ
ໃນວັນສຸດທ້າຍ, ແລະ ວ່າພວກເຂົາບໍ່ຕ້ອງ
ຢ້ານກົວ ຫລື ຕົວສັ່ນ, ແຕ່ວ່າໃຫ້ພວກເຂົາ
ເງີຍໜ້າຂຶ້ນ ແລະ ປິຕິຍິນດີ, ເພາະວ່າພຣະ
ຜູ້ເປັນເຈົ້າໄດ້ສ້າງມະນຸດທັງປວງຂຶ້ນມາ
ແລະ ໄດ້ໄຖ່ຄົນທັງປວງນຳອີກ, ແລະ ໃນ
ຕອນສຸດທ້າຍມະນຸດທັງປວງຈະມີຊີວິດນິ
ລັນດອນ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ສິດສອນເລື່ອງເຫລົ່ານີ້ ຈົນວ່າຜູ້ຄົນ
ຫລາຍຄົນໄດ້ເຊື່ອຖືໃນຄຳເວົ້າຂອງລາວ,
ຈົນວ່າຄົນເປັນຈຳນວນຫລວງຫລາຍເລີ່ມ
ຄ້ຳຊູ ແລະ ເອົາເງິນໃຫ້ລາວ.

6 ແລະ ລາວເລີ່ມມີຄວາມລະເມີເພີ້ຝັນ
ດ້ວຍຄວາມທະນົງໃຈ ແລະ ນຸ່ງຫົ່ມດ້ວຍ
ເສື້ອຜ້າທີ່ມີລາຄາແພງ, ແທ້ຈິງແລ້ວ, ລາວ
ໄດ້ເລີ່ມສະຖາປະນາ [ກ]ສາດສະໜາຈັກຂຶ້ນ
ຕາມວິທີການສັ່ງສອນຂອງລາວ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ລາວກຳລັງຈະໄປສັ່ງສອນຜູ້ທີ່
ເຊື່ອຖືໃນຄຳເວົ້າຂອງລາວຢູ່ນັ້ນ, ລາວໄດ້
ພົບພໍ້ກັບຄົນຜູ້ໜຶ່ງຊຶ່ງເປັນສະມາຊິກຂອງ
ສາດສະໜາຈັກຂອງພຣະເຈົ້າ, ແທ້ຈິງ
ແລ້ວ, ເປັນຜູ້ໜຶ່ງຂອງພວກຜູ້ສອນ ແລະ
ລາວໄດ້ເລີ່ມກ່າວຄຳຫຍາບຄາຍຢ່າງຮຸນ
ແຮງຕໍ່ຜູ້ນັ້ນວ່າ ລາວຈະຊັກຈູງຜູ້ຄົນຂອງ
ສາດສະໜາຈັກໄປ; ແຕ່ວ່າຊາຍຄົນນັ້ນໄດ້
ຕໍ່ຕ້ານລາວໂດຍໄດ້ຕັກເຕືອນລາວດ້ວຍ
[ກ]ພຣະຄຳຂອງພຣະເຈົ້າ.

8 ບັດນີ້ຊື່ຂອງຊາຍຄົນນັ້ນຄື [ກ]ກີເດໂອນ;
ແລະ ລາວເປັນເຄື່ອງມືໃນພຣະຫັດຂອງ
ພຣະເຈົ້າໃນການປົດປ່ອຍປະຊາຊົນຂອງ
ລິມໄຮອອກຈາກຄວາມເປັນທາດ.

9 ບັດນີ້ ຍ້ອນ ວ່າກີເດໂອນໄດ້ຕໍ່ຕ້ານ
ລາວດ້ວຍພຣະຄຳຂອງພຣະເຈົ້າ ລາວຈຶ່ງ
ຄຽດແຄ້ນໃຫ້ກີເດໂອນ ແລ້ວໄດ້ຖອດດາບ
ອອກມາ ແລະ ເລີ່ມຟັນກີເດໂອນເສຍ. ບັດ
ນີ້ກີເດໂອນໂດຍທີ່ມີອາຍຸແກ່ແລ້ວ, ສະນັ້ນ
ລາວຈຶ່ງບໍ່ສາມາດຕ້ານທານໄດ້, ສະນັ້ນ
ກີເດໂອນຈຶ່ງຖືກ [ກ]ຂ້າດ້ວຍດາບ.

10 ແລະ ຜູ້ທີ່ຂ້າກີເດໂອນໄດ້ຖືກຜູ້ຄົນ
ຂອງສາດສະໜາຈັກຈັບໄປ ແລະ ນຳເອົາມາ
ຢູ່ຕໍ່ໜ້າຂອງແອວມາເພື່ອຮັບການ [ກ]ຕັດສິນ
ຕາມຄວາມຜິດທີ່ລາວໄດ້ກະທຳໄວ້.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ຢືນຢູ່ຕໍ່ໜ້າແອວມາ ແລະ ແກ້ຂໍ້ກ່າວຫາ
ຢ່າງອາດຫານເພື່ອຕົວເອງ.

12 ແຕ່ ແອວມາ ກ່າວກັບລາວວ່າ: ຈົ່ງ
ເບິ່ງ, ນີ້ເປັນເທື່ອທຳອິດທີ່ [ກ]ການຫລອກ

---

2 ກ ແອວ 1:15.
3 ກ ອຊກ 13:3.
ຂ ຄມພ ຜູ້ຕໍ່ຕ້ານພຣະຄຣິດ.
ຄ ລກ 6:26; 1 ນຟ 22:23.
ງ ມຊຢ 18:24, 26; 27:5.
6 ກ 1 ນຟ 14:10.
7 ກ ຄມພ ພຣະຄຳຂອງພຣະເຈົ້າ.
8 ກ ມຊຢ 20:17; 22:3.
9 ກ ແອວ 6:7.
10 ກ ມຊຢ 29:42.
12 ກ 2 ນຟ 26:29. ຄມພ ການຫລອກລວງຂອງປະໂລຫິດ.

ລວງຂອງປະໂລຫິດ ຖືກເອົາມາໃຫ້ເປັນ
ທີ່ຮູ້ຈັກໃນບັນດາຜູ້ຄົນພວກນີ້. ແລະ ຈົ່ງ
ເບິ່ງ, ເຈົ້າບໍ່ພຽງແຕ່ຜິດເພາະການຫລອກ
ລວງຂອງປະໂລຫິດເທົ່ານັ້ນ, ແຕ່ຍັງພະຍາ
ຍາມບັງຄັບຜູ້ຄົນດ້ວຍດາບ; ແລະ ຖ້າຫາກ
ການຫລອກລວງຂອງປະໂລຫິດຖືກບັງ
ຄັບໃຊ້ໃນບັນດາຜູ້ຄົນແລ້ວ ກໍໝາຍຄວາມ
ວ່າຄວາມພິນາດທັງໝົດກໍຈະເກີດຂຶ້ນແກ່
ພວກເຂົາ.
13 ແລະ ເຈົ້າເຮັດໃຫ້ຄົນຊື່ສັດຜູ້ໜຶ່ງຕ້ອງ
ຕາຍໄປ, ແທ້ຈິງແລ້ວ, ຊຶ່ງເປັນຜູ້ທີ່ໄດ້ສ້າງ
ຄວາມດີໄວ້ຫລາຍທີ່ສຸດໃນບັນດາຜູ້ຄົນ
ເຫລົ່ານີ້; ແລະ ຖ້າຫາກພວກເຮົາໄວ້ຊີວິດ
ຂອງເຈົ້າ ແລ້ວເລືອດຂອງລາວກໍຈະມາ
ຟ້ອງພວກເຮົາເພື່ອ [ກ]ແກ້ແຄ້ນ.
14 ສະນັ້ນ ເຈົ້າຈຶ່ງຕ້ອງ [ກ]ໄດ້ຮັບໂທດປະ
ຫານຊີວິດຕາມກົດທີ່ໂມໄຊຢາ, ກະສັດຄົນ
ສຸດທ້າຍຂອງພວກເຮົາໄດ້ໃຫ້ໄວ້; ແລະ
ມັນເປັນທີ່ຍອມຮັບກັນໂດຍຜູ້ຄົນພວກນີ້;
ສະນັ້ນ ຜູ້ຄົນພວກນີ້ຕ້ອງປະຕິບັດຕາມກົດ
ນັ້ນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ເອົາລາວໄປ ແລະ ຊື່ຂອງລາວ
ແມ່ນ [ກ]ນີຮໍ; ແລະ ພວກເຂົາໄດ້ພາລາວຂຶ້ນ
ໄປຈອມເນີນພູແມນທາຍ, ແລະ ບ່ອນນັ້ນ
ເປັນລະຫວ່າງຟ້າສະຫວັນກັບແຜ່ນດິນ
ໂລກ ບ່ອນທີ່ລາວຍອມຮັບວ່າ ເລື່ອງທີ່
ລາວໄດ້ສິດສອນຜູ້ຄົນນັ້ນກົງກັນຂ້າມກັບ
ພຣະຄຳຂອງພຣະເຈົ້າ, ແລະ ບ່ອນທີ່ລາວ
ໄດ້ທົນທຸກທໍລະມານ ແລະ [ຂ]ຕາຍຢ່າງໜ້າ
ອັບອາຍ.
16 ເຖິງຢ່າງໃດກໍຕາມ, ສິ່ງນີ້ຍັງບໍ່ໄດ້
ເຮັດໃຫ້ການຂະຫຍາຍຕົວຂອງການ
ຫລອກລວງຂອງປະໂລຫິດໃນທົ່ວແຜ່ນ
ດິນຢຸດລົງໄດ້ ເພາະມີຫລາຍຄົນທີ່ຮັກສິ່ງ
ທີ່ບໍ່ມີປະໂຫຍດຂອງໂລກ, ແລະ ພວກເຂົາ
ໄດ້ອອກໄປສັ່ງສອນຄຳສອນທີ່ບໍ່ຖືກຕ້ອງ;
ແລະ ນີ້ພວກເຂົາໄດ້ກະທຳໄປເພື່ອເຫັນ
ແກ່ [ກ]ຄວາມຮັ່ງມີ ແລະ ກຽດສັກສີຂອງຕົນ
ເອງ.
17 ເຖິງຢ່າງໃດກໍຕາມ, ພວກເຂົາຍັງບໍ່
ກ້າເວົ້າ [ກ]ຕົວະ ເພາະຢ້ານກົວກົດໝາຍ,
ເພາະວ່າຜູ້ທີ່ເວົ້າຕົວະຍ່ອມຖືກລົງໂທດ;
ສະນັ້ນ ພວກເຂົາຈຶ່ງທຳທ່າສັ່ງສອນຕາມ
ຄວາມເຊື່ອຖືຂອງພວກເຂົາ; ແລະ ບັດ
ນີ້ກົດໝາຍບໍ່ມີອຳນາດກັບຜູ້ໃດໄດ້ຕາມ
ຄວາມເຊື່ອຖື [ຂ]ຂອງເຂົາ.
18 ແລະ ພວກເຂົາບໍ່ກ້າ [ກ]ລັກເພາະຢ້ານ
ກົວກົດໝາຍ, ເພາະວ່າການກະທຳແບບນີ້
ຈະໄດ້ຮັບການລົງໂທດ; ພວກເຂົາກໍບໍ່ກ້າ
ປຸ້ນສະດົມ, ຫລື ຄາດຕະກຳ, ເພາະວ່າຄົນ
ທີ່ເຮັດ [ຂ]ຄາດຕະກຳຈະຖືກລົງໂທດເຖິງແກ່
[ຄ]ຄວາມຕາຍ.
19 ແຕ່ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດ
ທີ່ບໍ່ໄດ້ເຂົ້າຮ່ວມສາດສະໜາຈັກຂອງພຣະ
ເຈົ້າໄດ້ເລີ່ມຂົ່ມເຫັງຜູ້ທີ່ເຂົ້າຮ່ວມສາດສະ
ໜາຈັກຂອງພຣະເຈົ້າ ແລະ ຜູ້ທີ່ຍອມຮັບ
ພຣະນາມຂອງພຣະຄຣິດ.
20 ແທ້ຈິງແລ້ວ, ພວກເຂົາໄດ້ຂົ່ມເຫັງ
ຄົນພວກເຂົາ, ແລະ ເຮັດໃຫ້ພວກເຂົາຕ້ອງ
ທຸກທໍລະມານດ້ວຍຄຳເວົ້າຕ່າງໆນາໆ,
ແລະ ນີ້ເພາະວ່າຄວາມຖ່ອມຕົວຂອງພວກ

13 ກ ຄມພ ແກ້ແຄ້ນ, ການແກ້ແຄ້ນ.
14 ກ ຄມພ ໂທດປະຫານຊີວິດ.
15 ກ ແອວ 1:2.
ຂ ພບຍ 13:1–9.
16 ກ ຄມພ ອວດອົ່ງ, ຄວາມອວດອົ່ງ; ຮັ່ງມີ, ຄວາມຮັ່ງມີ.
17 ກ ຄມພ ຊື່ສັດ, ຄວາມຊື່ສັດ; ຕົວະ.
ຂ ແອວ 30:7–12; ຫຼຂ 1:11.
18 ກ ຄມພ ລັກ, ການລັກ.
ຂ ຄມພ ຄາດຕະກຳ, ການຄາດຕະກຳ.
ຄ ຄມພ ໂທດປະຫານຊີວິດ.

ເຂົາ; ເພາະວ່າພວກເຂົາບໍ່ໄດ້ອວດດີໃນ
ສາຍຕາຂອງຕົນເອງ, ແລະ ຍ້ອນວ່າພວກ
ເຂົາໄດ້ໃຫ້ພຣະຄຳຂອງພຣະເຈົ້າແກ່ກັນ
ແລະກັນໂດຍບໍ່ໄດ້ຄິດເປັນ [ກ]ເງິນ ຫລື ຄຸນ
ຄ່າລາຄາແຕ່ຢ່າງໃດ.
21 ບັດນີ້ມັນມີກົດເຄັ່ງຄັດຂໍ້ໜຶ່ງໃນບັນ
ດາຜູ້ຄົນຂອງສາດສະໜາຈັກ, ຄືຈະບໍ່ມີ
ຜູ້ໃດທີ່ເປັນສະມາຊິກໃນສາດສະໜາຈັກ
ອອກໄປ [ກ]ຂົ່ມເຫັງຜູ້ທີ່ບໍ່ໄດ້ເຂົ້າຮ່ວມສາດ
ສະໜາຈັກ, ແລະ ຈະບໍ່ມີການຂົ່ມເຫັງຊຶ່ງ
ກັນແລະກັນໃນບັນດາພວກເຂົາເອງ.
22 ເຖິງຢ່າງໃດກໍຕາມ, ຍັງມີຄົນຫລາຍ
ຄົນໃນບັນດາພວກເຂົາທີ່ເລີ່ມອວດດີ ແລະ
ຜິດຖຽງກັນຢ່າງຮຸນແຮງຕໍ່ຜູ້ປໍລະປັກຂອງ
ຕົນຈົນວ່າມີການຕ່ອຍຕີກັນ; ແທ້ຈິງແລ້ວ,
ພວກເຂົາໄດ້ຕ່ອຍຕີກັນດ້ວຍກຳປັ້ນ.
23 ແລະ ບັດນີ້ມັນເປັນປີທີສອງຂອງ
ການປົກຄອງຂອງແອວມາ, ແລະ ເປັນສາ
ເຫດທີ່ເຮັດໃຫ້ສາດສະໜາຈັກມີຄວາມທຸກ
ຫລາຍ; ແທ້ຈິງແລ້ວ, ເປັນສາເຫດໃຫ້ສາດ
ສະໜາຈັກຕ້ອງມີຄວາມຫຍຸ້ງຍາກ.
24 ເພາະວ່າໃຈຂອງຫລາຍຄົນແຂງກະ
ດ້າງ, ແລະ ຊື່ຂອງພວກເຂົາໄດ້ຖືກ [ກ]ລຶບ,
ເພື່ອບໍ່ໃຫ້ເປັນທີ່ຈື່ຈຳຕໍ່ໄປໃນບັນດາຜູ້
ຄົນຂອງພຣະເຈົ້າ. ແລະ ມີຫລາຍຄົນໄດ້
[ຂ]ຖອນຕົວອອກໄປຈາກບັນດາພວກເຂົາ.
25 ບັດນີ້ ນີ້ເປັນເລື່ອງຫຍຸ້ງຍາກອັນ
ໃຫຍ່ຫລວງກັບຜູ້ທີ່ໝັ້ນຄົງຢູ່ໃນສັດທາ;
ເຖິງຢ່າງໃດກໍຕາມ, ພວກເຂົາຍັງແນ່ວແນ່
ແລະ ບໍ່ຫວັ່ນໄຫວໃນການຮັກສາພຣະບັນ
ຍັດຂອງພຣະເຈົ້າ, ແລະ ພວກເຂົາໄດ້ຮັບ
ເອົາການຂົ່ມເຫັງທີ່ກອບໂກຍໃສ່ພວກເຂົາ
ດ້ວຍ [ກ]ຄວາມອົດທົນ.
26 ແລະ ເວລາທີ່ປະໂລຫິດປະລະ [ກ]ວຽກ
ງານເພື່ອອອກໄປໃຫ້ພຣະຄຳຂອງພຣະ
ເຈົ້າແກ່ຜູ້ຄົນ, ຜູ້ຄົນກໍຕ້ອງປະລະວຽກງານ
ຂອງຕົນເພື່ອໄປຟັງພຣະຄຳຂອງພຣະ
ເຈົ້າຄືກັນ. ແລະ ເມື່ອປະໂລຫິດໃຫ້ພຣະ
ຄຳຂອງພຣະເຈົ້າແກ່ຜູ້ຄົນແລ້ວ ພວກເຂົາ
ກໍກັບຄືນໄປເຮັດວຽກຢ່າງພາກພຽນອີກ;
ແລະ ຜູ້ສອນບໍ່ໄດ້ຖືຕົວວ່າຕົນເອງສູງກວ່າ
ຜູ້ຟັງ, ເພາະຜູ້ສອນບໍ່ໄດ້ດີກວ່າຜູ້ຟັງ, ທັງຜູ້
ສອນບໍ່ໄດ້ດີກວ່າຜູ້ຮຽນເລີຍ; ແລະ ດັ່ງນັ້ນ
ຄົນທັງຫລາຍຈຶ່ງເທົ່າທຽມກັນ, ແລະ ພວກ
ເຂົາທັງໝົດທຳງານ, ທຸກຄົນ [ຂ]ຕາມກຳລັງ
ຂອງຕົນ.
27 ແລະ ພວກເຂົາ [ກ]ໃຫ້ເຂົ້າຂອງ ຂອງ
ພວກເຂົາ, ທຸກຄົນຕາມທີ່ພວກເຂົາມີ, ໃຫ້
ແກ່ [ຂ]ຄົນຍາກຈົນ, ແລະ ຄົນຂັດສົນ, ແລະ
ຄົນເຈັບປ່ວຍ, ແລະ ຄົນທີ່ເປັນທຸກ; ແລະ
ພວກເຂົາບໍ່ໄດ້ໃສ່ເສື້ອຜ້າທີ່ມີລາຄາແພງ,
ແຕ່ພວກເຂົາກໍຍັງຮຽບຮ້ອຍ ແລະ ໜ້າຊົມ.
28 ແລະ ພວກເຂົາຈຶ່ງໄດ້ສະຖາປະນາ
ການງານຂອງສາດສະໜາຈັກຂຶ້ນແບບນີ້;
ແລະ ເຖິງແມ່ນການຂົ່ມເຫັງທັງໝົດຂອງ
ພວກເຂົາ, ແຕ່ພວກເຂົາເລີ່ມມີສັນຕິສຸກ
ຕິດຕໍ່ກັນອີກດັ່ງນີ້.
29 ແລະ ບັດນີ້ເພາະວ່າຄວາມໝັ້ນຄົງ
ຂອງສາດສະໜາຈັກ ພວກເຂົາຈຶ່ງເປັນຄົນ
[ກ]ຮັ່ງມີຢ່າງຍິ່ງ, ໂດຍມີທຸກສິ່ງຢ່າງຫລວງ

20 *ກ* ອຊຢ 55:1–2.
21 *ກ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
24 *ກ* ອພຍ 32:33; ມຊຢ 26:36; ແອວ 6:3. ຄມພ ການຖືກໄລ່ອອກ.
*ຂ* ແອວ 46:7. ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
25 *ກ* ຄມພ ອົດທົນ, ຄວາມອົດທົນ.
26 *ກ* ມຊຢ 18:24, 26; 27:3–5.
*ຂ* ມຊຢ 4:27; ຄພ 10:4.
27 *ກ* ຄມພ ໃຫ້ທານ, ການໃຫ້ທານ.
*ຂ* ລກ 18:22; ມຊຢ 4:26; ຄພ 42:29–31.
29 *ກ* ຄມພ ຮັ່ງມີ, ຄວາມຮັ່ງມີ.

ຫລາຍບໍ່ວ່າອັນໃດກໍຕາມທີ່ພວກເຂົາຕ້ອງ
ການ—ແລະ ມີຝູງສັດລ້ຽງ ແລະ ຝູງສັດ
ໃຊ້ແຮງງານ, ແລະ ລູກສັດລ້ຽງທຸກຊະນິດ,
ແລະ ພືດພັນຢ່າງຫລວງຫລາຍ, ພ້ອມທັງ
ຄຳ, ແລະ ພ້ອມທັງເງິນ, ແລະ ຂອງມີຄ່າ,
ແລະ ຜ້າໄໝ ແລະ [ຂ]ຜ້າລີນິນ ຕ່ຳຢ່າງດີ
ຫລວງຫລາຍ, ແລະ ຜ້າຢ່າງດີທຸກຊະນິດທີ່
ໃຊ້ໃນບ້ານ.
30 ແລະ ໃນສະພາບອັນ [ກ]ຈະເລີນຮຸ່ງ
ເຮືອງຂອງພວກເຂົາແບບນີ້, ພວກເຂົາບໍ່
ໄດ້ປະໃຫ້ຜູ້ໃດ [ຂ]ເປືອຍເປົ່າ, ຫລື ຫິວໂຫຍ,
ຫລື ກະຫາຍນ້ຳ, ຫລື ເຈັບປວດ, ຫລື ຂາດ
ການບຳລຸງລ້ຽງ; ແລະ ພວກເຂົາບໍ່ໄດ້ໝົກ
ໝຸ້ນຢູ່ກັບຂອງມີຄ່າ; ສະນັ້ນ ພວກເຂົາຈຶ່ງ
ແຈກຢາຍໃຫ້ແກ່ທຸກຄົນທັງຜູ້ເຖົ້າ ແລະ ຜູ້
ໜຸ່ມ, ທັງຂ້າທາດ ແລະ ຜູ້ເປັນອິດສະລະ,
ທັງຊາຍ ແລະ ຍິງ, ບໍ່ວ່າຈະຢູ່ນອກສາດສະ
ໜາຈັກ, ຫລື ຢູ່ໃນສາດສະໜາຈັກກໍຕາມ
ໂດຍບໍ່ໄດ້ [ຄ]ເຫັນແກ່ຜູ້ໃດຜູ້ໜຶ່ງເມື່ອຄົນ
ເຫລົ່ານັ້ນຢູ່ໃນຄວາມຕ້ອງການ.
31 ແລະ ພວກເຂົາໄດ້ຈະເລີນຮຸ່ງເຮືອງ
ແລະ ຮັ່ງມີເປັນດີກວ່າຜູ້ທີ່ບໍ່ໄດ້ເປັນຂອງ
ສາດສະໜາຈັກຂອງພວກເຂົາດັ່ງນັ້ນ.
32 ເພາະວ່າຜູ້ທີ່ບໍ່ໄດ້ເປັນຂອງສາດສະ
ໜາຈັກຂອງພວກເຂົາໄດ້ເອົາໃຈໃສ່ກັບ
ເວດມົນຄາຖາ, ແລະ ກັບ [ກ]ການນັບຖືຮູບ
ບູຊາ ຫລື [ຂ]ຄວາມຂີ້ຄ້ານມັກງ່າຍ; ແລະ
[ຄ]ການເວົ້າບໍ່ມີສາລະ, ແລະ [ງ]ການອິດສາ
ບັງບຽດ ແລະ ການຜິດຖຽງກັນ, ນຸ່ງຖືເສື້ອ
ຜ້າທີ່ມີລາຄາແພງ; [ຈ]ລະເມີເພີ້ຝັນດ້ວຍ
ຄວາມທະນົງຕົວໃນສາຍຕາຂອງຕົນເອງ;
ຂົ່ມເຫັງ, ເວົ້າຕົວະ, ຂີ້ລັກມັກສົກ, ການ
ທຳການໂສເພນີ, ແລະ ການຄາດຕະກຳ,
ແລະ ກະທຳຄວາມຊົ່ວຮ້າຍນາໆປະການ;
ເຖິງຢ່າງໃດກໍຕາມ, ກົດໝາຍຍັງໄດ້ບັງຄັບ
ຜູ້ທີ່ລ່ວງລະເມີດມັນເທົ່າທີ່ຈະເຮັດໄດ້.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂດຍການໃຊ້ກົດໝາຍກັບຜູ້ຄົນ, ດັ່ງນັ້ນ
ທຸກຄົນຈຶ່ງຕ້ອງໄດ້ຮັບໂທດຕາມຄວາມຜິດ
ຂອງຕົນ, ມັນຈຶ່ງມີຄວາມສະຫງົບລົງ, ແລະ
ບໍ່ມີຜູ້ໃດກ້າເຮັດຄວາມຊົ່ວຮ້າຍໃດໆ ດັ່ງທີ່
ຮູ້ຈັກກັນ; ສະນັ້ນ, ຈຶ່ງມີສັນຕິສຸກຫລາຍໃນ
ບັນດາຜູ້ຄົນຂອງນີໄຟຈົນເຖິງປີທີຫ້າແຫ່ງ
ການປົກຄອງຂອງຜູ້ຕັດສິນ.

## ບົດທີ 2

*ອາມລີໄຊພະຍາຍາມຈະເປັນກະສັດ ແລະ ຖືກປະຕິເສດໂດຍສຽງຂອງຜູ້ຄົນ—ຜູ້ຕິດຕາມຂອງລາວໄດ້ແຕ່ງຕັ້ງລາວໃຫ້ເປັນກະສັດ—ຊາວອາມລີໄຊກໍ່ສົງຄາມກັບຊາວນີໄຟ ແລະ ໄດ້ເສຍໄຊໄປ—ຊາວເລມັນກັບຊາວອາມລີໄຊຮວມກຳລັງເຂົ້າກັນ ແລະ ໄດ້ເສຍໄຊໄປ—ແອວມາຂ້າອາມລີໄຊ. ປະມານ 87 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນເລີ່ມ
ຈາກປີທີຫ້າແຫ່ງການປົກຄອງຂອງພວກ
ເຂົາ, ມັນເລີ່ມມີການຜິດຖຽງກັນໃນບັນ
ດາຜູ້ຄົນ; ເພາະວ່າມີຄົນຜູ້ໜຶ່ງຊື່ວ່າ ອາມ
ລີໄຊ, ລາວເປັນຄົນສະຫລາດແກມໂກງ,
ແທ້ຈິງແລ້ວ, ລາວເປັນຄົນສະຫລາດຕາມ
ລະບຽບຂອງໂລກ, ລາວເປັນຄົນແບບດຽວ

29 ຂ ແອວ 4:6.
30 ກ ຢຄ 2:17–19.
ຂ ຄມພ ຍາກຈົນ.
ຄ ແອວ 16:14; ຄພ 1:35.
32 ກ ຄມພ ການນັບຖືຮູບບູຊາ.
ຂ ຄມພ ກຽດຄ້ານ, ຄວາມກຽດຄ້ານ.
ຄ ຄມພ ເວົ້າຈາບໍ່ດີ.
ງ ຄມພ ອິດສາ.
ຈ ຢຄ 2:13; ແອວ 31:25; ມມ 8:28. ຄມພ ຈອງຫອງ, ຄວາມຈອງຫອງ.

ກັບຜູ້ທີ່ຂ້າ [ກ]ກິເດໂອນດ້ວຍດາບ ຜູ້ຊຶ່ງໄດ້ຖືກປະຫານຊີວິດໄປແລ້ວຕາມກົດໝາຍ—

2 ບັດນີ້ ອາມລິໄຊຄົນນີ້ໄດ້ຊັກຊວນຜູ້ຄົນຫລາຍຄົນໃຫ້ຕິດຕາມລາວໄປດ້ວຍເລ່ຫລ່ຽມຂອງລາວ; ມາກຫລາຍຈົນພວກເຂົາເລີ່ມມີອຳນາດຫລາຍຂຶ້ນ; ແລະ ພວກເຂົາເລີ່ມພະຍາຍາມສະຖາປະນາອາມລິໄຊໃຫ້ເປັນກະສັດປົກຄອງພວກເຂົາ.

3 ບັດນີ້ ມັນ ເຮັດໃຫ້ຜູ້ຄົນຂອງສາດສະໜາຈັກຕື່ນຕົກໃຈພ້ອມທັງຜູ້ຄົນທີ່ບໍ່ໄດ້ຖືກຊັກນຳໄປຕາມການຊັກນຳຂອງອາມລິໄຊນຳອີກ; ເພາະວ່າພວກເຂົາຮູ້ວ່າຕາມກົດໝາຍຂອງພວກເຂົາ ເລື່ອງແບບນີ້ຕ້ອງສະຖາປະນາຂຶ້ນໂດຍ [ກ]ສຽງຂອງຜູ້ຄົນ.

4 ສະນັ້ນ, ຖ້າຫາກເປັນໄປໄດ້ທີ່ອາມລິໄຊຈະໄດ້ສຽງຂອງປະຊາຊົນ, ໂດຍທີ່ລາວເປັນຄົນຊົ່ວ, ລາວຈະ [ກ]ເຮັດໃຫ້ຄົນທັງໝົດໝົດສິດ ແລະ ສິດທິພິເສດຂອງສາດສະໜາຈັກ; ເພາະວ່າມັນເປັນເຈດຕະນາຂອງລາວທີ່ຈະທຳລາຍສາດສະໜາຈັກຂອງພຣະເຈົ້າ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໄດ້ມາຊຸມນຸມກັນຕະຫລອດທົ່ວແຜ່ນດິນຕາມຄວາມສະໝັກໃຈຂອງໃຜລາວ, ແລ້ວແຕ່ຈະໄປນຳອາມລິໄຊ, ຫລື ວ່າຈະຕໍ່ຕ້ານລາວ ໄດ້ແຍກກັນເປັນກຸ່ມໆ, ໂດຍມີການໂຕ້ຖຽງ ແລະ [ກ]ຂັດແຍ້ງກັນຢ່າງໜ້າປະຫລາດ.

6 ແລະ ພວກເຂົາໄດ້ມາຊຸມນຸມກັນແບບນັ້ນ ເພື່ອອອກສຽງຂອງຕົນກ່ຽວກັບເລື່ອງນີ້ ແລະ ໄດ້ນຳສະເໜີເລື່ອງນີ້ຕໍ່ຜູ້ຕັດສິນ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ສຽງຂອງຜູ້ຄົນ ໄດ້ຕໍ່ຕ້ານອາມລິໄຊ, ຈົນວ່າລາວບໍ່ໄດ້ເປັນກະສັດປົກຄອງຜູ້ຄົນ.

8 ແລະ ບັດນີ້ມັນໄດ້ເຮັດໃຫ້ໃຈຂອງຜູ້ທີ່ຄັດຄ້ານລາວປິຕິຍິນດີທີ່ສຸດ; ແຕ່ອາມລິໄຊໄດ້ຍຸຍົງຜູ້ທີ່ເຫັນດ້ວຍກັບລາວໃຫ້ຄຽດແຄ້ນໃຫ້ຜູ້ທີ່ບໍ່ເຫັນດ້ວຍກັບລາວ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ມາເຕົ້າໂຮມກັນ ແລະ ໄດ້ແຕ່ງຕັ້ງອາມລິໄຊໃຫ້ເປັນກະສັດຂອງພວກເຂົາ.

10 ບັດນີ້ເມື່ອອາມລິໄຊໄດ້ເປັນກະສັດປົກຄອງພວກເຂົາແລ້ວ ລາວກໍສັ່ງໃຫ້ຜູ້ຄົນຈັບອາວຸດຂຶ້ນຕໍ່ສູ້ກັບພີ່ນ້ອງຂອງພວກເຂົາ; ແລະ ສິ່ງນີ້ເຮັດໄປເພື່ອລາວຈະເຮັດໃຫ້ພວກນັ້ນມາຂຶ້ນກັບລາວ.

11 ບັດນີ້ຜູ້ຄົນຂອງອາມລິໄຊແຕກຕ່າງອອກໄປຕາມຊື່ຂອງອາມລິໄຊ, ໂດຍມີຊື່ວ່າ ຊາວ [ກ]ອາມລິໄຊ; ແລະ ຜູ້ທີ່ເຫລືອຢູ່ມີຊື່ວ່າ [ຂ]ຊາວນີໄຟ, ຫລື ຜູ້ຄົນຂອງພຣະເຈົ້າ.

12 ສະນັ້ນ ຜູ້ຄົນຊາວນີໄຟໄດ້ຮູ້ຈັກເຖິງເຈດຕະນາຂອງຊາວອາມລິໄຊ, ແລະ ສະນັ້ນພວກເຂົາຈຶ່ງໄດ້ຕຽມພ້ອມເພື່ອຈະໄດ້ປະເຊີນໜ້າກັບຊາວອາມລິໄຊ; ແທ້ຈິງແລ້ວ, ພວກເຂົາໄດ້ຖືອາວຸດທຸກຊະນິດເຊັ່ນດາບ ແລະ ດາບສອງຄົມ, ຄັນທະນູ ແລະ ລູກທະນູ, ກ້ອນຫີນ ແລະ ກະຖຸນ, ແລະ [ກ]ອາວຸດແຫ່ງສົງຄາມທຸກຊະນິດ.

13 ແລະ ພວກເຂົາຕຽມພ້ອມເພື່ອຈະໄດ້ປະເຊີນໜ້າກັບຊາວອາມລິໄຊທີ່ຈະຍົກທັບມາຕີດັ່ງນັ້ນ. ແລະ ໄດ້ມີການແຕ່ງຕັ້ງນາຍທະຫານ, ແລະ ນາຍທະຫານຊັ້ນສູງ, ແລະ ຫົວໜ້ານາຍທະຫານ, ຕາມຈຳນວນຜູ້ຄົນຂອງພວກເຂົາ.

**2** 1ກ ແອວ 1:8.
3ກ ມຊຢ 29:25–27; ແອວ 4:16.
4ກ ແອວ 10:19; ຣລມ 5:2.
5ກ 3 ນຟ 11:29.
11ກ ແອວ 3:4.
ຂ ຢຄ 1:13–14; ມຊຢ 25:12; ແອວ 3:11.
12ກ ມຊຢ 10:8; ຣລມ 1:14.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື ອາມ
ລິໄຊໄດ້ສັ່ງໃຫ້ຜູ້ຄົນຖືອາວຸດແຫ່ງສົງຄາມ
ທຸກ ຊະ ນິດ; ແລະ ລາວ ໄດ້ ແຕ່ງຕັ້ງຜູ້ປົກ
ຄອງ ແລະ ຜູ້ນຳດູແລຜູ້ຄົນຂອງລາວຄືກັນ
ເພື່ອຈະໄດ້ນຳເອົາຄົນເຫລົ່ານັ້ນໄປເຮັດສົງ
ຄາມກັບພີ່ນ້ອງຂອງຕົນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ອາມລິໄຊໄດ້ຍົກທັບມາເຖິງເນີນພູອາມໄນ
ຫູ, ຊຶ່ງຢູ່ທາງເບື້ອງຕາເວັນອອກຂອງ ᵃແມ່
ນ້ຳຊີໂດນ, ຊຶ່ງໄຫລຜ່ານ ᵇແຜ່ນດິນເຊຣາ
ເຮັມລາ, ແລະ ຢູ່ບ່ອນນັ້ນທີ່ພວກເຂົາໄດ້
ເລີ່ມຕໍ່ສູ້ກັບຊາວນີໄຟ.
16 ບັດນີ້, ແອວມາໂດຍທີ່ເປັນ ᵃຫົວໜ້າ
ຜູ້ຕັດສິນ ແລະ ຜູ້ປົກຄອງຜູ້ຄົນຂອງນີໄຟ,
ສະນັ້ນ ເພິ່ນຈຶ່ງໄດ້ຂຶ້ນໄປພ້ອມກັບຜູ້ຄົນ
ຂອງເພິ່ນ, ແທ້ຈິງແລ້ວ, ພ້ອມກັບນາຍທະ
ຫານຂອງເພິ່ນ, ແລະ ຫົວໜ້ານາຍທະຫານ
ຂອງເພິ່ນ, ແທ້ຈິງແລ້ວ, ເພິ່ນໄດ້ນຳໜ້າ
ກອງທັບຂອງເພິ່ນໄປສູ້ຮົບກັບຊາວອາມລິ
ໄຊ.
17 ແລະ ພວກເຂົາເລີ່ມຂ້າຟັນຊາວອາມ
ລິໄຊໃນເນີນພູທາງຕາເວັນອອກຂອງແມ່
ນ້ຳຊີໂດນ. ແລະ ຊາວອາມລິໄຊໄດ້ຕໍ່ສູ້ກັບ
ຊາວນີໄຟດ້ວຍກຳລັງອັນມະຫາສານ, ເຖິງ
ຂະໜາດທີ່ຊາວນີໄຟເປັນຈຳນວນຫລວງ
ຫລາຍໄດ້ລົ້ມຕາຍຕໍ່ໜ້າຊາວອາມລິໄຊ.
18 ເຖິງ ຢ່າງ ໃດ ກໍຕາມ ພຣະຜູ້ເປັນ
ເຈົ້າຍັງປະທານກຳລັງໃຫ້ແກ່ມືຂອງຊາວ
ນີໄຟຢູ່, ຈົນວ່າໄດ້ຂ້າຊາວອາມລິໄຊເປັນ
ຈຳນວນຫລວງຫລາຍ, ຈົນວ່າຊາວອາມລິ
ໄຊເລີ່ມປົບໜີໄປຕໍ່ໜ້າພວກເຂົາ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາວນີໄຟໄດ້ໄລ່ຕິດຕາມຊາວອາມລິໄຊ
ໄປໝົດມື້ນັ້ນ, ແລະ ໄດ້ຂ້າພວກເຂົາຢ່າງ
ຫລວງຫລາຍ, ເຖິງຂະໜາດທີ່ມີຊາວອາມ
ລິໄຊຖືກ ᵃຂ້າຕາຍເຖິງໜຶ່ງໝື່ນສອງພັນຫ້າ
ຮ້ອຍສາມສິບສອງຄົນ; ແລະ ມີຊາວນີໄຟ
ຖືກຂ້າຕາຍຫົກພັນຫ້າຮ້ອຍຫົກສິບສອງ
ຄົນ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ແອວມາບໍ່ສາມາດໄລ່ຕາມຊາວອາມລິໄຊ
ຕໍ່ໄປອີກແລ້ວ ເພິ່ນຈຶ່ງສັ່ງໃຫ້ຜູ້ຄົນຂອງ
ເພິ່ນ ຕັ້ງ ຄ້າຍ ຂຶ້ນ ໃນ ᵃຮ່ອມພູກີເດໂອນ,
ເອີ້ນຮ່ອມພູນີ້ຕາມຊື່ຂອງກີເດໂອນ ຊຶ່ງຖືກ
ຂ້າຕາຍດ້ວຍດາບໂດຍມືຂອງ ᵇນີຮໍ; ແລະ
ຊາວນີໄຟໄດ້ຕັ້ງຄ້າຍຂຶ້ນຢູ່ໃນຮ່ອມພູນີ້ໃນ
ຄືນນັ້ນ.
21 ແລະ ແອວມາໄດ້ສົ່ງຄົນສອດແນມ
ອອກຕິດຕາມຊາວອາມລິໄຊທີ່ເຫລືອຢູ່
ເພື່ອເພິ່ນຈະໄດ້ຮູ້ຈັກແຜນການ ແລະ ກົນ
ອຸບາຍຂອງພວກເຂົາ, ຊຶ່ງໂດຍທາງນີ້ ເພິ່ນ
ຈຶ່ງຈະໄດ້ປ້ອງກັນຕົວໃຫ້ພົ້ນຈາກພວກ
ເຂົາ, ເພື່ອເພິ່ນຈະໄດ້ປົກປັກຮັກສາຜູ້ຄົນ
ຂອງເພິ່ນບໍ່ໃຫ້ຖືກທຳລາຍ.
22 ບັດນີ້ ຄົນທີ່ເພິ່ນສົ່ງໄປເບິ່ງຄ້າຍຂອງ
ຊາວອາມລິໄຊນັ້ນຊື່ວ່າ ຊີຣຳ, ອາມນໍ,
ແມນທາຍ, ແລະ ລິມເຮີ; ພວກນີ້ໄດ້ອອກ
ໄປພ້ອມຄົນຈຳນວນໜຶ່ງ ເພື່ອຕິດຕາມເບິ່ງ
ຄ້າຍຂອງຊາວອາມລິໄຊ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ ພວກເຂົາໄດ້ກັບຄືນມາຫາຄ້າຍ
ຂອງຊາວນີໄຟຢ່າງຮີບຮ້ອນທີ່ສຸດ, ຊຶ່ງມີ
ຄວາມແປກປະຫລາດໃຈ, ແລະ ມີຄວາມ
ຢ້ານກົວຫລາຍ, ໂດຍກ່າວວ່າ:
24 ຈົ່ງເບິ່ງ, ພວກເຮົາໄດ້ຕິດຕາມໄປ
ຫາຄ້າຍຂອງ ᵃຊາວອາມລິໄຊ ແລະ ເຮັດ

15 ກ ແອວ 3:3.
ຂ ອມນ 1:13–15.
16 ກ ມຊຢ 29:42.
19 ກ ແອວ 3:1–2, 26; 4:2.
20 ກ ແອວ 6:7.
ຂ ແອວ 1:7–15; 14:16.
24 ກ ແອວ 3:4, 13–18.

ໃຫ້ພວກເຮົາປະຫລາດໃຈ ຫລາຍທີ່ສຸດ, ເພາະວ່າຢູ່ໃນແຜ່ນດິນໄມນອນທາງເໜືອແຜ່ນດິນເຊຣາເຮັມລາ, ຢູ່ໃນເສັ້ນທາງໄປຫາແຜ່ນດິນ ᵉນີໄຟນັ້ນ, ພວກເຮົາໄດ້ເຫັນທະຫານຊາວເລມັນ ເປັນ ຈຳນວນ ຫລວງຫລາຍ; ແລະ ຈົ່ງເບິ່ງ, ຊາວອາມລິໄຊໄດ້ເຂົ້າສົມທົບກັບພວກເຂົາ;

25 ແລະ ພວກເຂົາໄດ້ຍົກກອງທັບມາເຖິງພວກອ້າຍນ້ອງຂອງພວກເຮົາຜູ້ຢູ່ໃນແຜ່ນດິນນັ້ນ; ແລະ ພວກເຂົາໄດ້ໜີໄປກ່ອນພ້ອມທັງຝູງສັດລ້ຽງ, ແລະ ເມຍຂອງພວກເຂົາ, ແລະ ລູກຂອງພວກເຂົາ, ມຸ້ງໜ້າມາຫາເມືອງຂອງພວກເຮົາ; ແລະ ຖ້າຫາກພວກເຮົາບໍ່ຟ້າວໄປ, ພວກເຂົາຈະເປັນເຈົ້າຂອງເມືອງຂອງພວກເຮົາ, ແລະ ບິດາຂອງພວກເຮົາ, ແລະ ເມຍຂອງພວກເຮົາ, ແລະ ລູກຂອງພວກເຮົາຈະຖືກຂ້າ.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງນີໄຟຈຶ່ງໄດ້ຟ້າວມັດມັດເອົາຜ້າເຕັ້ນຂອງພວກເຂົາ, ແລະ ອອກຈາກຮ່ອມພູກີເດໂອນ ມຸ້ງໜ້າໄປຫາເມືອງຂອງພວກເຂົາ, ຄືເມືອງ ᵃເຊຣາເຮັມລາ.

27 ແລະ ຈົ່ງເບິ່ງ, ໃນຂະນະທີ່ພວກເຂົາກຳລັງຈະຂ້າມແມ່ນ້ຳຊີໂດນຢູ່ນັ້ນ, ຊາວເລມັນກັບຊາວອາມລິໄຊ, ຊຶ່ງມີ ᵃຈຳນວນຫລາຍ, ຄືກັບວ່າ ເມັດຊາຍໃນທະເລໄດ້ເຂົ້າມາໂຈມຕີເພື່ອທຳລາຍພວກເຂົາ.

28 ເຖິງຢ່າງໃດກໍຕາມ, ຊາວນີໄຟໂດຍໄດ້ຮັບ ᵃກຳລັງຈາກພຣະຫັດຂອງພຣະຜູ້ເປັນເຈົ້າ, ໂດຍໄດ້ອະທິຖານຢ່າງສຸດກຳລັງຕໍ່ພຣະອົງເພື່ອພຣະອົງຈະໄດ້ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ, ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງໄດ້ຍິນສຽງອ້ອນວອນຂອງພວກເຂົາ ແລະ ໄດ້ປະທານກຳລັງໃຫ້ພວກເຂົາ, ແລະ ຊາວເລມັນກັບຊາວອາມລິໄຊໄດ້ລົ້ມຕາຍລົງຕໍ່ໜ້າພວກເຂົາເປັນຈຳນວນຫລວງຫລາຍ.

29 ແລະ ເຫດການໄດ້ບັງເກີດຂຶ້ນຄື ແອວມາໄດ້ຕໍ່ສູ້ກັບອາມລິໄຊຕົວຕໍ່ຕົວດ້ວຍດາບ, ແລະ ທັງສອງໄດ້ຕໍ່ສູ້ກັນຢ່າງສຸດກຳລັງ.

30 ແລະ ເຫດການໄດ້ບັງເກີດຂຶ້ນຄື ແອວມາໂດຍເປັນຄົນຂອງພຣະເຈົ້າ, ໂດຍທີ່ມີ ᵃສັດທາອັນແຮງກ້າ ຈຶ່ງໄດ້ຮ້ອງອອກມາວ່າ: ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງໂປດເມດຕາ ແລະ ໄວ້ຊີວິດຂອງຂ້ານ້ອຍດ້ວຍເຖີດ, ເພື່ອວ່າ ຂ້ານ້ອຍ ຈະໄດ້ ເປັນເຄື່ອງມືໃນພຣະຫັດຂອງພຣະອົງໃນການຊ່ວຍເຫລືອ ແລະ ປົກປັກຮັກສາຜູ້ຄົນພວກນີ້.

31 ບັດນີ້ເມື່ອແອວມາກ່າວຄຳເຫລົ່ານີ້ແລ້ວ ເພິ່ນກໍໄດ້ຕໍ່ສູ້ກັບອາມລິໄຊອີກ; ແລະ ເພິ່ນໄດ້ຮັບກຳລັງ, ເຖິງຂະໜາດທີ່ເພິ່ນໄດ້ຂ້າອາມລິໄຊດ້ວຍດາບ.

32 ແລະ ເພິ່ນໄດ້ຕໍ່ສູ້ກັບກະສັດຂອງຊາວເລມັນນຳອີກ; ແຕ່ວ່າກະສັດຂອງຊາວເລມັນໄດ້ປົບໜີໄປຕໍ່ໜ້າແອວມາ ແລະ ໄດ້ສົ່ງທະຫານອາລັກຂາຂອງຕົນມາຕໍ່ສູ້ກັບແອວມາ.

33 ແຕ່ ແອວມາ ກັບ ທະ ຫານ ອາ ລັກ ຂາຂອງເພິ່ນໄດ້ຕໍ່ສູ້ກັບ ທະຫານ ອາລັກ ຂາຂອງກະສັດຂອງຊາວເລມັນ ຈົນວ່າເພິ່ນໄດ້ຂ້າ ແລະ ຂັບໄລ່ພວກເຂົາໃຫ້ຖອຍກັບຄືນໄປ.

34 ແລະ ເພິ່ນ ຈຶ່ງ ໄດ້ ກວາດ ລ້າງ ແຜ່ນດິນແນວນີ້, ຫລື ແທ້ຈິງແລ້ວ, ຝັ່ງຊຶ່ງຢູ່ທາງຕາເວັນຕົກຂອງແມ່ນ້ຳຊີໂດນ, ໄດ້ໂຍນສົບຊາວເລມັນຜູ້ທີ່ຖືກຂ້າຕາຍລົງໃນນ້ຳຊີໂດນເພື່ອໃຫ້ຜູ້ຄົນຂອງເພິ່ນມີບ່ອນຂ້າມ

24 ຂ 2 ນຟ 5:8.
26 ກ ອມນ 1:14, 18.
27 ກ ຈຣ 1:6.
28 ກ ພບຍ 31:6.
30 ກ ຄມພ ສັດທາ.

ໄປຕໍ່ສູ້ກັບຊາວເລມັນ ແລະ ຊາວອາມລິໄຊ
ທາງຝັ່ງຕາເວັນຕົກຂອງແມ່ນ້ຳຊີໂດນໄດ້
ສະດວກ.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຂົາຂ້າມແມ່ນ້ຳຊີໂດນໄປແລ້ວ ຊາວ
ເລມັນກັບ ຊາວອາມລິໄຊເລີ່ມປົບໜີໄປ
ກ່ອນ, ທັງໆທີ່ພວກເຂົາມີຄົນເປັນຈຳນວນ
ຫລາຍກວ່າຈົນນັບບໍ່ຖ້ວນ.
36 ແລະ ພວກເຂົາໄດ້ໜີໄປກ່ອນຊາວ
ນີໄຟຈະມາຮອດ ມຸ້ງໜ້າເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານ ຊຶ່ງຢູ່ທາງຕາເວັນຕົກ
ແລະ ທາງເໜືອຊາຍແດນຂອງແຜ່ນດິນ
ໄປ; ແລະ ຊາວນີໄຟໄດ້ໄລ່ຕິດຕາມພວກ
ເຂົາໄປດ້ວຍກຳລັງອັນມະຫາສານ ແລະ
ໄດ້ຂ້າພວກເຂົາຖິ້ມ.
37 ແທ້ຈິງແລ້ວ, ພວກເຂົາຖືກອ້ອມໄວ້
ທຸກດ້ານ, ແລະ ຖືກຂ້າຕາຍ, ແລະ ຖືກ
ຂັບໄລ່ຈົນກະຈັດກະຈາຍໄປ ທາງຕາເວັນ
ຕົກ ແລະ ທາງເໜືອຈົນເຖິງຖິ່ນແຫ້ງແລ້ງ
ກັນດານ, ຊຶ່ງມີຊື່ວ່າ ເຮີເມົ້າ; ແລະ ມັນເປັນ
ສ່ວນໜຶ່ງຂອງຖິ່ນແຫ້ງແລ້ງກັນດານ ຊຶ່ງມີ
ສັດປ່າ ແລະ ສັດຮ້າຍຫລາຍ.
38 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລາຍຄົນໄດ້ຕາຍໄປໃນຖິ່ນແຫ້ງແລ້ງກັນ
ດານຍ້ອນບາດແຜຂອງຕົນ, ແລະ ຖືກສັດ
ປ່າເຫລົ່ານັ້ນກິນຊາກສົບຂອງພວກເຂົາ,
ແລະ ແຮ້ງໃນອາກາດກິນນຳອີກ; ແລະ ພົບ
ກະດູກຂອງພວກເຂົາກອງຢູ່ທົ່ວແຜ່ນດິນ.

## ບົດທີ 3

*ຊາວອາມລິໄຊມີເຄື່ອງໝາຍຂອງຕົນເອງ ຕາມຄຳທີ່ໄດ້ທຳນາຍໄວ້—ຊາວເລມັນຖືກສາບແຊ່ງເພາະການກະບົດຂອງພວກເຂົາ—ມະນຸດນຳການສາບແຊ່ງມາສູ່ຕົນເອງ—ຊາວນີໄຟຊະນະກອງທັບຂອງຊາວເລມັນອີກກອງທັບໜຶ່ງ. ປະມານ 87–86 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ນີໄຟຜູ້ທີ່ບໍ່ໄດ້ຖືກ [ກ]ຂ້າຕາຍດ້ວຍອາວຸດ
ແຫ່ງສົງຄາມ, ຫລັງຈາກໄດ້ຝັງສົບຜູ້ທີ່
ຖືກຂ້າຕາຍ—ບັດນີ້ພວກເຂົາບໍ່ໄດ້ນັບ
ຈຳນວນຄົນທີ່ຖືກຂ້າຕາຍ, ເພາະຄວາມ
ຫລວງຫລາຍຂອງມັນ—ຫລັງຈາກພວກ
ເຂົາໄດ້ຝັງສົບຂອງຜູ້ຕາຍຂອງພວກເຂົາ
ຮຽບຮ້ອຍແລ້ວ ທຸກຄົນກໍໄດ້ກັບຄືນໄປຫາ
ແຜ່ນດິນຂອງຕົນ, ແລະ ໄປຫາບ້ານເຮືອນ
ຂອງຕົນ, ໄປຫາເມຍຂອງຕົນ, ແລະ ໄປຫາ
ລູກຂອງຕົນ.
2 ບັດນີ້ຜູ້ຍິງກັບເດັກນ້ອຍຫລາຍຄົນໄດ້
ຖືກຂ້າຕາຍດ້ວຍດາບ, ແລະ ຝູງສັດລ້ຽງ
ຂອງພວກເຂົາ ແລະ ຝູງສັດໃຊ້ແຮງງານ
ຂອງພວກເຂົານຳອີກ; ແລະ ເຄື່ອງປູກ
ຂອງຝັງໃນທົ່ງເປັນຈຳນວນຫລວງຫລາຍ
ໄດ້ຖືກທຳລາຍຄືກັນ, ເພາະຖືກຜູ້ຄົນເປັນ
ຈຳນວນຫລວງຫລາຍຢຽບຢ່ຳ.
3 ແລະ ບັດນີ້ຊາວເລມັນກັບຊາວອາມ
ລິໄຊຫລາຍຕໍ່ຫລາຍຄົນທີ່ຖືກຂ້າຕາຍຢູ່
ແຄມແມ່ນ້ຳຊີໂດນນັ້ນໄດ້ຖືກໂຍນລົງໃນ
[ກ]ນ້ຳຊີໂດນ; ແລະ ຈົ່ງເບິ່ງ ກະດູກຂອງ
ພວກເຂົາຖືກຝັງຢູ່ໃນຄວາມເລິກຂອງ
[ຂ]ທະເລ, ແລະ ມັນມີຢູ່ຢ່າງຫລວງຫລາຍ.
4 ແລະ [ກ]ຊາວອາມລິໄຊມີຄວາມແຕກ
ຕ່າງຈາກຊາວນີໄຟ, ເພາະພວກເຂົາເຮັດ
[ຂ]ເຄື່ອງໝາຍສີແດງໄວ້ທີ່ໜ້າຜາກຂອງ
ພວກເຂົາຕາມແບບຢ່າງຂອງຊາວເລມັນ;
ເຖິງຢ່າງໃດກໍຕາມ ພວກເຂົາບໍ່ໄດ້ແຖຫົວ

**3** 1*ກ* ແອວ 2:19; 4:2.
3*ກ* ແອວ 2:15.
*ຂ* ແອວ 44:22.
4*ກ* ແອວ 2:11.
*ຂ* ແອວ 3:13–19.

ຄືກັນກັບຊາວເລມັນ.
5 ບັດນີ້ຫົວຂອງຊາວເລມັນບໍ່ມີຜົມ; ແລະ
ພວກເຂົາ [ກ]ເປືອຍໂຕນອກຈາກມີແຕ່ແຜ່ນ
ໜັງ ຄຸງ ແອວ, ແລະ ເຄື່ອງປ້ອງ ກັນ ຕົວ
ເກາະຫຸ້ມຫໍ່ຕົວໄວ້, ແລະ ຖືຄັນທະນູຂອງ
ພວກເຂົາ, ແລະ ລູກທະນູຂອງພວກເຂົາ,
ແລະ ກ້ອນຫີນຂອງພວກເຂົາ, ແລະ ກະ
ຖຸນຂອງພວກເຂົາ, ແລະ ອື່ນໆ.
6 ແລະ ຜິວໜັງຂອງຊາວເລມັນນັ້ນຄ້ຳ,
ຊຶ່ງເປັນໄປຕາມເຄື່ອງໝາຍດັ່ງບັນພະບຸ
ລຸດຂອງພວກເຂົາມີຕິດຕົວມາ, ເພາະມັນ
ເປັນການ [ກ]ສາບ ແຊ່ງ ໄວ້ຍ້ອນການລ່ວງ
ລະເມີດຂອງພວກເຂົາ ແລະ ຍ້ອນການກະ
ບົດຂອງພວກເຂົາຕໍ່ພີ່ນ້ອງຂອງພວກເຂົາ
ເຊັ່ນ ນີໄຟ, ຢາໂຄບ, ແລະ ໂຢເຊັບ, ແລະ
ແຊມ, ຜູ້ຊຶ່ງເປັນຄົນຊອບທຳ ແລະ ບໍລິສຸດ.
7 ແລະ ພີ່ນ້ອງຂອງພວກເຂົາພະຍາຍາມ
ຈະທຳລາຍພວກເຂົາ, ສະນັ້ນ ພວກເຂົາຈຶ່ງ
ຖືກສາບແຊ່ງ ແລະ ອົງພຣະຜູ້ເປັນເຈົ້າໄດ້
ຕິດ [ກ]ເຄື່ອງໝາຍໄວ້ກັບພວກເຂົາ, ແທ້ຈິງ
ແລ້ວ, ໄວ້ກັບເລມັນ ແລະ ເລມູເອນ, ແລະ
ພວກລູກຊາຍຂອງອິດຊະມາເອນ, ແລະ
ພວກຜູ້ຍິງຊາວອິດຊະມາເອນນຳອີກ.
8 ແລະ ນີ້ເປັນໄປເພື່ອລູກຫລານຂອງ
ພວກເຂົາຈະໄດ້ແຕກຕ່າງຈາກລູກຫລານ
ຂອງພີ່ນ້ອງຂອງພວກເຂົາ, ເພື່ອແນວນີ້ອົງ
ພຣະຜູ້ເປັນເຈົ້າຈະໄດ້ປົກປັກຮັກສາຜູ້ຄົນ
ຂອງພຣະອົງ, ເພື່ອພວກເຂົາຈະບໍ່ [ກ]ປະປົນ
ແລະ ເຊື່ອຖືໃນ [ຂ]ຮີດຄອງປະເພນີອັນບໍ່
ຖືກຕ້ອງ ຊຶ່ງຈະນຳຄວາມພິນາດມາສູ່ພວກ
ເຂົາ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດ
ກໍຕາມທີ່ປ່ອຍລູກຫລານຂອງຕົນໃຫ້ຮ່ວມ
ສຳພັນກັບຊາວເລມັນ ພວກນັ້ນຈະໄດ້ນຳ
ເອົາການສາບແຊ່ງແບບດຽວກັນມາສູ່ລູກ
ຫລານຂອງຕົນ.
10 ສະນັ້ນ, ຜູ້ໃດກໍຕາມທີ່ຍອມຕົວໃຫ້
ຊາວເລມັນຊັກນຳໄປ ພວກນັ້ນກໍຈະຖືກ
ເອີ້ນຕາມພວກນັ້ນ, ແລະ ມີເຄື່ອງໝາຍຕິດ
ຢູ່ກັບພວກເຂົາ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ໃດກໍຕາມທີ່ບໍ່ຍອມເຊື່ອຖືໃນ [ກ]ຮີດຄອງ
ປະເພນີຂອງຊາວເລມັນ, ແຕ່ວ່າເຊື່ອຖືບັນ
ທຶກເຫລົ່ານັ້ນ ຊຶ່ງຖືກນຳອອກຈາກແຜ່ນ
ດິນເຢຣູຊາເລັມ, ແລະ ເຊື່ອຖືໃນຮີດຄອງ
ປະເພນີຂອງບັນພະບຸລຸດຂອງພວກເຂົາ
ຊຶ່ງຖືກຕ້ອງ, ຜູ້ທີ່ເຊື່ອໃນພຣະບັນຍັດຂອງ
ພຣະເຈົ້າ ແລະ ໄດ້ຮັກສາມັນ, ຖືກເອີ້ນ
ວ່າ ຊາວນີໄຟ ຫລື ຜູ້ຄົນຂອງນີໄຟນັບແຕ່
ເວລານັ້ນໄປ—
12 ແລະ ແມ່ນ ພວກ ເຂົາ ທີ່ ໄດ້ ຮັກ ສາ
ບັນ ທຶກ ຊຶ່ງເປັນ [ກ]ຄວາມຈິງຂອງ ຜູ້ ຄົນ
ຂອງພວກເຂົາ, ແລະ ຂອງຜູ້ຄົນຂອງຊາວ
ເລມັນນຳອີກ.
13 ບັດ ນີ້ພວກ ເຮົາ ຈະ ກັບ ມາ ເວົ້າ ເຖິງ
ຊາວ ອາມ ລິ ໄຊ, ເພາະວ່າພວກເຂົາມີ
[ກ]ເຄື່ອງໝາຍຕິດຢູ່ກັບຕົວ; ແທ້ຈິງແລ້ວ,
ເປັນເຄື່ອງໝາຍສີແດງເທິງໜ້າຜາກຂອງ
ພວກເຂົາ.
14 ພຣະຄຳຂອງພຣະເຈົ້າສຳເລັດແລ້ວ,
ນີ້ຄືພຣະຄຳຊຶ່ງພຣະອົງໄດ້ກ່າວກັບນີໄຟ
ວ່າ: ຈົ່ງເບິ່ງ, ເຮົາສາບແຊ່ງຊາວເລມັນ

5 *ກ* ອນ 1:20; ມຊຢ 10:8; ແອວ 42:18–21.
6 *ກ* 2 ນຟ 5:21; 26:33. ຄມພ ສາບແຊ່ງ, ຄຳສາບແຊ່ງ.
7 *ກ* 1 ນຟ 12:23.
8 *ກ* ຄມພ ແຕ່ງງານ, ການແຕ່ງງານ—ການແຕ່ງງານກັບຄົນຕ່າງສາດສະໜາ.
*ຂ* ມຊຢ 10:11–18; ແອວ 9:16.
11 *ກ* ແອວ 17:9–11.
12 *ກ* ມຊຢ 1:6; ອທ 4:6–11.
13 *ກ* ແອວ 3:4.

ໄວ້ແລ້ວ, ແລະ ເຮົາຈະຕິດເຄື່ອງໝາຍໄວ້
ກັບພວກເຂົາເພື່ອພວກເຂົາກັບລູກຫລານ
ຂອງພວກເຂົາຈະແຍກອອກຈາກເຈົ້າກັບ
ລູກຫລານຂອງເຈົ້າ, ນັບແຕ່ເວລານີ້ເປັນ
ຕົ້ນໄປ ແລະ ຕະຫລອດການ, ຖ້າຫາກ
ພວກເຂົາບໍ່ກັບໃຈຈາກຄວາມຊົ່ວຮ້າຍ
ຂອງພວກເຂົາ ແລະ ກກັບມາຫາເຮົາເພື່ອ
ເຮົາຈະມີຄວາມເມດຕາຕໍ່ພວກເຂົາ.
15 ແລະ ອີກຢ່າງໜຶ່ງ: ເຮົາຈະຕິດເຄື່ອງ
ໝາຍໄວ້ກັບຜູ້ທີ່ປ່ອຍລູກຫລານຂອງຕົນ
ໃຫ້ຮ່ວມສຳພັນກັບພີ່ນ້ອງຂອງເຈົ້າ ເພື່ອ
ພວກເຂົາຈະໄດ້ຖືກສາບແຊ່ງນຳກັນ.
16 ແລະ ອີກຢ່າງໜຶ່ງ: ເຮົາຈະຕິດເຄື່ອງ
ໝາຍໄວ້ກັບຜູ້ທີ່ຕໍ່ສູ້ກັບເຈົ້າ ແລະ ລູກ
ຫລານຂອງເຈົ້າ.
17 ແລະ ອີກຢ່າງໜຶ່ງ, ເຮົາກ່າວວ່າ ຈະບໍ່
ເອີ້ນຜູ້ທີ່ໜີໄປຈາກເຈົ້າວ່າເປັນລູກຫລານ
ຂອງເຈົ້າອີກຕໍ່ໄປ; ແລະ ເຮົາຈະໃຫ້ພອນ
ແກ່ເຈົ້າກັບຜູ້ທີ່ຖືກເອີ້ນວ່າເປັນລູກຫລານ
ຂອງເຈົ້າ, ນັບແຕ່ເວລານີ້ເປັນຕົ້ນໄປ ແລະ
ຕະຫລອດການ, ແລະ ນີ້ຄືຄຳສັນຍາຂອງ
ພຣະຜູ້ເປັນເຈົ້າທີ່ປະທານໃຫ້ແກ່ນີໄຟກັບ
ລູກຫລານຂອງເພິ່ນ.
18 ບັດນີ້ຊາວອາມລິໄຊບໍ່ຮູ້ຈັກເລີຍວ່າ
ພວກເຂົາກຳລັງເຮັດໃຫ້ພຣະຄຳຂອງພຣະ
ເຈົ້າສຳເລັດ ເມື່ອພວກເຂົາ ເລີ່ມເຮັດເຄື່ອງ
ໝາຍໃຫ້ຕົນເອງໄວ້ເທິງໜ້າຜາກຂອງ
ພວກເຂົາ; ເຖິງຢ່າງໃດກໍຕາມ ພວກເຂົາຍັງ
ໄດ້ອອກມາໃນ ກການກະບົດຕໍ່ພຣະເຈົ້າ
ຢ່າງເປີດເຜີຍ; ສະນັ້ນ ມັນສົມຄວນແລ້ວທີ່
ການສາບແຊ່ງຈະຕົກຢູ່ກັບພວກເຂົາ.
19 ບັດນີ້ຂ້າພະເຈົ້າຢາກໃຫ້ທ່ານເຫັນ
ວ່າ ພວກເຂົານຳເອົາ ກການສາບແຊ່ງມາ
ສູ່ຕົວຂອງພວກເຂົາເອງ; ແລະ ຈົນກະທັ້ງ
ທຸກໆຄົນທີ່ຖືກສາບແຊ່ງກໍຈະນຳເອົາການ
ກ່າວໂທດມາສູ່ຕົນເອງ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ຕໍ່ມາ
ອີກບໍ່ຫລາຍມື້ຫລັງຈາກການສູ້ຮົບໄດ້ເກີດ
ຂຶ້ນ ໃນແຜ່ນດິນເຊຣາເຮັມລາ, ໂດຍຊາວ
ເລມັນ ແລະ ຊາວອາມລິໄຊ, ໄດ້ມີກອງທັບ
ອີກກອງໜຶ່ງຂອງຊາວເລມັນຍົກມາໂຈມ
ຕີຜູ້ຄົນຂອງນີໄຟ, ໃນບ່ອນ ກດຽວກັນກັບ
ບ່ອນກອງທັບທຳອິດຂອງພວກເຂົາພົບກັບ
ຊາວອາມລິໄຊນັ້ນ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
ກອງທັບກອງໜຶ່ງໄດ້ຖືກສົ່ງອອກໄປເພື່ອ
ຂັບໄລ່ກອງທັບພວກເຂົາອອກຈາກແຜ່ນ
ດິນຂອງພວກເຂົາ.
22 ບັດນີ້ຕົວແອວມາເອງໂດຍທີ່ເປັນທຸກ
ນຳການໄດ້ຮັບ ກບາດເຈັບ ຈຶ່ງບໍ່ໄດ້ອອກ
ໄປສູ້ຮົບກັບຊາວເລມັນໃນເທື່ອນີ້;
23 ແຕ່ເພິ່ນໄດ້ສົ່ງກອງທັບໃຫຍ່ອອກໄປ
ຕໍ່ສູ້ກັບພວກເຂົາ; ແລະ ກອງທັບຂອງເພິ່ນ
ໄດ້ໄປຂ້າຊາວເລມັນເປັນຈຳນວນຫລວງ
ຫລາຍ, ແລະ ໄດ້ຂັບໄລ່ພວກທີ່ເຫລືອຕາຍ
ອອກໄປຈາກຊາຍແດນຂອງແຜ່ນດິນຂອງ
ພວກເຂົາ.
24 ແລ້ວກອງທັບຂອງພວກນີ້ກໍໄດ້ກັບ
ຄືນມາ ແລະ ເລີ່ມສະຖາປະນາສັນຕິສຸກ
ຂຶ້ນໃນແຜ່ນດິນ, ໂດຍບໍ່ມີສັດຕູມາລົບ
ກວນອີກຕໍ່ໄປຊົ່ວໄລຍະໜຶ່ງ.
25 ບັດນີ້ສິ່ງທັງໝົດນີ້ຜ່ານໄປ, ແທ້ຈິງ
ແລ້ວ, ສົງຄາມ ແລະ ການຂັດແຍ້ງກັນເລີ່ມ
ຂຶ້ນ ແລະ ສິ້ນສຸດລົງໃນປີທີຫ້າແຫ່ງການ
ປົກຄອງຂອງຜູ້ຕັດສິນ.
26 ແລະ ພາຍໃນໜຶ່ງປີ ຄົນເປັນພັນໆ

14 *ກ* 2 ນຟ 30:4–6.
18 *ກ* 4 ນຟ 1:38.
ຄນພ ກະບົດ, ການກະບົດ.
19 *ກ* 2 ນຟ 5:21–25;
ແອວ 17:15.
20 *ກ* ແອວ 2:24.
22 *ກ* ແອວ 2:29–33.

ແລະ ເປັນ ໝື່ນໆ ໄດ້ ຖືກ ສົ່ງ ໄປ ສູ່ ໂລກ
ຊົ່ວນິລັນດອນ ເພື່ອພວກເຂົາຈະ ໄດ້ຮັບ
[ກ]ລາງວັນຂອງພວກເຂົາຕາມວຽກງານຂອງ
ພວກເຂົາ ບໍ່ວ່າພວກເຂົາຈະດີ ຫລື ຈະຊົ່ວ,
ເພື່ອເກັບກ່ຽວເອົາຄວາມຜາສຸກຊົ່ວນິລັນ
ດອນ ຫລື ເກັບກ່ຽວເອົາຄວາມທຸກທໍລະ
ມານຊົ່ວນິລັນດອນ, ອັນເປັນໄປຕາມວິນ
ຍານຊຶ່ງພວກເຂົາໄດ້ເລືອກເຊື່ອຟັງ, ບໍ່ວ່າ
ຈະເປັນວິນຍານດີ ຫລື ວິນຍານຊົ່ວ.
27 ເພາະທຸກຄົນຍ່ອມໄດ້ຮັບ [ກ]ຄ່າຈ້າງ
ຈາກຄົນຜູ້ທີ່ຕົນເລືອກ [ຂ]ເຊື່ອຟັງ, ແລະ ນີ້
ເປັນໄປຕາມຄຳເວົ້າຂອງວິນຍານ ແຫ່ງ
ການທຳນາຍ; ສະນັ້ນຂໍໃຫ້ເປັນໄປຕາມ
ຄວາມຈິງ. ແລະ ປີທີຫ້າແຫ່ງການປົກຄອງ
ຂອງຜູ້ຕັດສິນກໍໄດ້ສິ້ນສຸດລົງດັ່ງນີ້.

## ບົດທີ 4

*ແອວມາໃຫ້ບັບຕິສະມາແກ່ຄົນເປັນຈຳນວນຫລາຍພັນຄົນທີ່ເຫລື້ອມໃສ—ຄວາມຊົ່ວຮ້າຍເຂົ້າມາໃນສາດສະໜາຈັກ, ແລະ ຄວາມກ້າວໜ້າຂອງສາດສະໜາຈັກຖືກຂັດຂວາງ—ນີໄຟຮາໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າຜູ້ຕັດສິນ—ແອວມາ, ຊຶ່ງເປັນມະຫາປະໂລຫິດ, ໄດ້ອຸທິດຕົນເພື່ອປະຕິບັດສາດສະໜາກິດ. ປະມານ 86–83 ປີກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີທີ
ຫົກແຫ່ງການປົກຄອງຂອງຜູ້ຕັດສິນຜູ້ຄົນ
ຂອງນີໄຟ, ມັນບໍ່ມີການຂັດແຍ້ງ ຫລື ສົງ
ຄາມໃນ [ກ]ແຜ່ນດິນເຊຣາເຮັມລາເລີຍ;
2 ແຕ່ວ່າຜູ້ຄົນໄດ້ຮັບຄວາມເປັນທຸກ,
ແທ້ຈິງແລ້ວ, ແມ່ນເປັນທຸກຢ່າງແສນສາ
ຫັດ ເພາະວ່າ [ກ]ການລົ້ມຕາຍຂອງພີ່ນ້ອງ
ຂອງພວກເຂົາ, ແລະ ເພາະການສູນເສຍ
ຝູງສັດລ້ຽງຂອງພວກເຂົາ ແລະ ຝູງສັດ
ໃຊ້ແຮງງານຂອງພວກເຂົານຳອີກ, ແລະ
ເພາະວ່າການສູນເສຍເຄື່ອງປູກຂອງຝັງ
ໃນທົ່ງຂອງພວກເຂົາ ຊຶ່ງຖືກຊາວເລມັນ
ຢຽບຢ່ຳໄວ້ໃຕ້ພື້ນດິນ ແລະ ທຳລາຍຈົນ
ໝົດ.
3 ແລະ ຄວາມ ທຸກ ຂອງ ພວກ ເຂົາ ນັ້ນ
ແສນສາຫັດຈົນວ່າທຸກຄົນຕ້ອງເປັນທຸກ;
ແລະ ພວກເຂົາເຊື່ອວ່າມັນເປັນຈາກການ
ພິພາກສາຂອງພຣະເຈົ້າ ຊຶ່ງສົ່ງມາຫາ
ພວກເຂົາ ເພາະວ່າຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງຂອງພວກເຂົາ; ສະນັ້ນ
ພວກເຂົາຈຶ່ງໄດ້ຖືກປຸກໃຫ້ຕື່ນຂຶ້ນຫາ
ຄວາມຊົງຈຳເຖິງໜ້າທີ່ຂອງພວກເຂົາ.
4 ແລະ ພວກເຂົາໄດ້ເລີ່ມຕົ້ນສະຖາ
ປະນາສາດສະໜາຈັກໃຫ້ສົມບູນຂຶ້ນ; ແທ້
ຈິງແລ້ວ, ຫລາຍຄົນໄດ້ຮັບ [ກ]ບັບຕິສະມາ
ໃນແມ່ນ້ຳຊີໂດນ ແລະ ໄດ້ເຂົ້າຮ່ວມສາດ
ສະໜາຈັກຂອງພຣະເຈົ້າ; ແທ້ຈິງແລ້ວ,
ພວກເຂົາໄດ້ຮັບບັບຕິສະມາໂດຍມືຂອງ
ແອວມາ, ຜູ້ຖືກແຕ່ງຕັ້ງໃຫ້ເປັນ [ຂ]ມະຫາ
ປະໂລຫິດດ້ວຍມືຂອງແອວມາຜູ້ເປັນບິດາ
ຂອງເພິ່ນ ເພື່ອເບິ່ງແຍງຜູ້ຄົນໃນສາດສະ
ໜາຈັກ.
5 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ເຈັດແຫ່ງການປົກຄອງຂອງຜູ້ຕັດສິນ ໄດ້ມີ
ຄົນປະມານສາມພັນຫ້າຮ້ອຍຄົນທີ່ໄດ້ເຂົ້າ
ຮ່ວມ [ກ]ສາດສະໜາຈັກຂອງພຣະເຈົ້າ ແລະ
ໄດ້ຮັບບັບຕິສະມາ. ແລະ ປີທີເຈັດແຫ່ງ

26 ກ ຄມພ ວຽກງານ.
27 ກ ມຊຢ 2:31–33;
ແອວ 5:41–42.
ຂ ຣມ 6:16; ຮລມ 14:29–31.
ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.
4 1 ກ ອມນ 1:12–19.
2 ກ ແອວ 2:19; 3:1–2, 26.
4 ກ ມຊຢ 18:10–17.
ຂ ມຊຢ 29:42.
5 ກ ມຊຢ 25:18–23;
3 ນຟ 26:21.

ການປົກຄອງຜູ້ຄົນຂອງນີໄຟຂອງຜູ້ຕັດສິນ
ໄດ້ສິ້ນສຸດລົງດັ່ງນີ້; ແລະ ມີສັນຕິສຸກຕິດຕໍ່
ກັນຕະຫລອດເວລານັ້ນ.
6 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ແປດແຫ່ງການປົກຄອງຂອງຜູ້ຕັດສິນ, ຄື
ປະຊາຊົນເລີ່ມອວດດີຂຶ້ນ ເພາະ [ກ]ຄວາມ
ຮັ່ງມີຂອງພວກເຂົາ, ແລະ ເພາະຜ້າໄໝ
[ຂ]ແນວດີຂອງພວກເຂົາ, ແລະ ຜ້າລີນິນຕໍ່າ
ຢ່າງດີຂອງພວກເຂົາ, ແລະ ເພາະຝູງສັດ
ລ້ຽງ ແລະ ຝູງສັດໃຊ້ແຮງງານຢ່າງຫລວງ
ຫລາຍຂອງພວກເຂົາ, ແລະ ເພາະຄໍາຂອງ
ພວກເຂົາ ແລະ ເງິນຂອງພວກເຂົາ, ແລະ
ສິ່ງຂອງມີຄ່ານາໆຊະນິດຊຶ່ງພວກເຂົາໄດ້
ມາຈາກການອຸດສາຫະກໍາຂອງພວກເຂົາ;
ແລະ ດ້ວຍສິ່ງທັງໝົດນີ້ ພວກເຂົາຈຶ່ງລະ
ເມີເພີ້ຝັນດ້ວຍຄວາມທະນົງຕົວໃນສາຍຕາ
ຂອງຕົນເອງ, ເພາະພວກເຂົາເລີ່ມໃສ່ເສື້ອ
ຜ້າທີ່ມີລາຄາແພງ.
7 ບັດນີ້ມັນເປັນເຫດໃຫ້ແອວມາມີຄວາມ
ທຸກຫລາຍ, ແທ້ຈິງແລ້ວ, ແລະ ຕໍ່ຫລາຍ
ຄົນທີ່ແອວມາໄດ້ [ກ]ແຕ່ງຕັ້ງໃຫ້ເປັນຜູ້ສອນ,
ແລະ ເປັນປະໂລຫິດ, ແລະ ເປັນແອວເດີ
ເພື່ອດູແລສາດສະໜາຈັກ; ແທ້ຈິງແລ້ວ
ຄົນຢ່າງຫລວງຫລາຍໃນພວກເຂົາໂສກ
ເສົ້າເພາະຄວາມຊົ່ວຮ້າຍທີ່ພວກເຂົາເຫັນ
ແລະ ມັນກໍາລັງເລີ່ມເກີດຂຶ້ນໃນບັນດາຜູ້
ຄົນຂອງພວກເຂົາ.
8 ເພາະວ່າພວກເຂົາໄດ້ເຫັນ ແລະ ໄດ້
ເບິ່ງດ້ວຍຄວາມເສົ້າສະຫລົດໃຈ ວ່າຜູ້ຄົນ
ຂອງສາດສະໜາຈັກເລີ່ມລະເມີເພີ້ຝັນ
ດ້ວຍ [ກ]ຄວາມທະນົງຕົວໃນສາຍຕາຂອງ
ຕົນເອງ, ແລະ ໝົກໝຸ້ນຢູ່ກັບຂອງມີຄ່າ
ແລະ ກັບສິ່ງທີ່ບໍ່ມີປະໂຫຍດຂອງໂລກ, ຈົນ
ວ່າພວກເຂົາໄດ້ໝິ່ນປະໝາດຊຶ່ງກັນແລະ
ກັນ, ແລະ ພວກເຂົາເລີ່ມກົດຂີ່ຂົ່ມເຫັງຜູ້ທີ່
[ຂ]ບໍ່ເຊື່ອໃນຄວາມປາດຖະໜາ ຫລື ຄວາມ
ພໍໃຈຂອງພວກເຂົາ.
9 ແລະ ໃນປີທີແປດແຫ່ງການປົກຄອງ
ຂອງຜູ້ຕັດສິນ, ມັນເລີ່ມມີ [ກ]ການຂັດແຍ້ງ
ກັນຢ່າງໃຫຍ່ຫລວງໃນບັນດາຜູ້ຄົນຂອງ
ສາດສະໜາຈັກດັ່ງນີ້; ແທ້ຈິງແລ້ວ, ມີ
[ຂ]ການອິດສາບັງບຽດ, ແລະ ການຜິດຖຽງ
ກັນ, ແລະ ເຈດຕະນາຮ້າຍ, ແລະ ຂົ່ມເຫັງ,
ແລະ ຄວາມທະນົງຕົວ, ເຖິງຂະໜາດທີ່ກັບ
ມາຫລາຍກວ່າຄວາມທະນົງຕົວຂອງຜູ້ທີ່
ບໍ່ໄດ້ເປັນສະມາຊິກຂອງສາດສະໜາຈັກ
ຂອງພຣະເຈົ້າຊໍ້າອີກ.
10 ແລະ ປີທີແປດແຫ່ງການປົກຄອງ
ຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້; ແລະ
ຄວາມຊົ່ວຮ້າຍຂອງຜູ້ຄົນຂອງສາດສະ
ໜາຈັກເປັນສິ່ງທີ່ເຮັດໃຫ້ສະດຸດອັນໃຫຍ່
ຫລວງແກ່ຜູ້ທີ່ບໍ່ເປັນຂອງສາດສະໜາຈັກ;
ແລະ ສາດສະໜາຈັກເລີ່ມເສື່ອມໂຊມລົງ
ຕາມຄວາມກ້າວໜ້າຂອງສິ່ງທີ່ບໍ່ດີດັ່ງນີ້.
11 ແລະ ເຫດການໄດ້ບັງເກີດຂຶ້ນໃນ
ຕົ້ນປີທີເກົ້າ, ແອວມາໄດ້ເຫັນຄວາມຊົ່ວ
ຮ້າຍຂອງສາດສະໜາຈັກ ແລະ ເພິ່ນເຫັນ
ອີກວ່າ [ກ]ຕົວຢ່າງຂອງສາດສະໜາຈັກເລີ່ມ
ພາຜູ້ຄົນທີ່ບໍ່ເຊື່ອເຮັດຄວາມຊົ່ວຮ້າຍຈາກ
ຢ່າງໜຶ່ງຫາອີກຢ່າງໜຶ່ງ, ນັ້ນເປັນການນໍາ
ຄວາມພິນາດມາສູ່ຜູ້ຄົນ.
12 ແທ້ຈິງແລ້ວ, ເພິ່ນໄດ້ເຫັນຄວາມບໍ່
ສະເໝີພາບຫລາຍຢ່າງໃນບັນດາຜູ້ຄົນ,
ບາງຄົນເພີ້ຝັນດ້ວຍຄວາມທະນົງຕົວ, ໝິ່ນ

6 *ກ* ຄມພ ຮັ່ງມີ, ຄວາມຮັ່ງມີ.
*ຂ* ແອວ 1:29.
7 *ກ* ຄມພ ສິດອໍານາດ.
8 *ກ* ຄມພ ຈອງຫອງ, ຄວາມ ຈອງຫອງ;
ອວດອ້າງ, ຄວາມອວດອ້າງ.
*ຂ* ແອວ 1:21.
9 *ກ* ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຂ* ຄມພ ອິດສາ.
11 *ກ* 2 ຊມອ 12:14; ແອວ 39:11.

ປະໝາດຄົນອື່ນ, ຫັນຫລັງໃສ່ [ກ]ຄົນຂັດສົນ
ແລະ ຄົນທີ່ເປືອຍເປົ່າ ແລະ [ຂ]ຄົນຫິວໂຫຍ,
ແລະ ຄົນທີ່ກະຫາຍ, ແລະ ຄົນເຈັບປ່ວຍ
ແລະ ເປັນທຸກ.
13 ບັດນີ້ ມັນ ເປັນ ຕົ້ນ ເຫດ ແລະ ສ້າງ
ການ ຄ່ຳ ຄວນ ໃນບັນດາຜູ້ຄົນ, ຂະນະທີ່
ຄົນ ອື່ນໆ ກຳລັງຖ່ອມ ຕົວ, ກຳ ລັງ ຊ່ວຍ
ເຫລືອຄົນທີ່ຕ້ອງການຄວາມຊ່ວຍເຫລືອ,
ເປັນຕົ້ນ [ກ]ການໃຫ້ເຂົ້າຂອງແກ່ຄົນຍາກ
ຈົນ ແລະ ຄົນຂັດສົນ, ໃຫ້ອາຫານແກ່ຄົນ
ທີ່ຫິວໂຫຍ, ແລະ ທົນຕໍ່ [ຂ]ຄວາມທຸກນາໆ
ປະການ [ຄ]ເພື່ອເຫັນແກ່ພຣະຄຣິດຜູ້ຈະສະ
ເດັດມາຕາມວິນຍານແຫ່ງການທຳນາຍ;
14 ໂດຍການຄອຍຫາມື້ນັ້ນ, ໂດຍ [ກ]ການ
ຮັກສາການປົດບາບຂອງພວກເຂົາໄວ້,
ໂດຍເຕັມໄປດ້ວຍ [ຂ]ຄວາມຊື່ນຊົມອັນຍິ່ງ
ໃຫຍ່ ເພາະການຟື້ນຄືນຊີວິດຂອງຄົນຕາຍ
ຕາມພຣະປະສົງ ແລະ ອຳນາດ ແລະ ການ
ປົດປ່ອຍຂອງພຣະເຢຊູຄຣິດຈາກສາຍຮັດ
ແຫ່ງຄວາມຕາຍ.
15 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ແອວມາ, ໂດຍທີ່ໄດ້ເຫັນຄວາມທຸກຂອງ
ຜູ້ຕິດຕາມທີ່ຖ່ອມຕົວຂອງພຣະເຈົ້າ, ແລະ
ການ ຂົ່ມ ເຫັງ ຊຶ່ງກອງຂຶ້ນກັບຄົນ ເຫລົ່າ
ນັ້ນ ໂດຍຜູ້ຄົນຂອງເພິ່ນທີ່ເຫລືອຢູ່, ແລະ
[ກ]ຄວາມບໍ່ສະເໝີພາບທຸກຢ່າງຂອງພວກ
ເຂົາ, ຈຶ່ງເລີ່ມມີຄວາມເສົ້າສະຫລົດໃຈທີ່ສຸດ;
ເຖິງຢ່າງໃດກໍຕາມ ພຣະວິນຍານຂອງພຣະ
ຜູ້ເປັນເຈົ້າບໍ່ໄດ້ເຮັດໃຫ້ເພິ່ນຜິດຫວັງເລີຍ.
16 ແລະ ເພິ່ນ ໄດ້ ເລືອກ ເອົາ ຄົນທີ່
ສະຫລາດຜູ້ໜຶ່ງໃນບັນດາແອວເດີຂອງ
ສາດສະໜາຈັກ, ແລະ ໃຫ້ອຳນາດແກ່
ເພິ່ນຕາມ [ກ]ສຽງຂອງຜູ້ຄົນ, ເພື່ອເພິ່ນຈະ
ໄດ້ມີອຳນາດອອກ [ຂ]ກົດຕາມກົດໝາຍທີ່ມີ
ໄວ້, ແລະ ໃຊ້ບັງຄັບຄວາມຊົ່ວຮ້າຍ ແລະ
ຄວາມຜິດຂອງຜູ້ຄົນ.
17 ບັດນີ້ຊື່ຂອງຊາຍຄົນນັ້ນແມ່ນ ນີໄຟ
ຮາ, ແລະ ເພິ່ນໄດ້ຖືກແຕ່ງຕັ້ງໃຫ້ເປັນ [ກ]ຫົວ
ໜ້າຜູ້ຕັດສິນ; ແລະ ເພິ່ນໄດ້ນັ່ງຢູ່ເທິງບັນ
ລັງຕັດສິນເພື່ອຕັດສິນ ແລະ ເພື່ອປົກຄອງ
ຜູ້ຄົນ.
18 ບັດ ນີ້ ແອວມາ ບໍ່ ໄດ້ ມອບ ຕຳ ແໜ່ງ
ມະຫາປະໂລຫິດເພື່ອດູແລສາດສະໜາຈັກ
ໃຫ້ແກ່ເພິ່ນ, ແຕ່ເພິ່ນໄດ້ຮັກສາຕຳແໜ່ງ
ມະຫາປະໂລຫິດໄວ້ໃຫ້ຕົນເອງ; ເພິ່ນພຽງ
ແຕ່ມອບບັນລັງຕັດສິນໃຫ້ແກ່ນີໄຟຮາ ເທົ່າ
ນັ້ນ.
19 ແລະ ເພິ່ນ ເຮັດ ສິ່ງ ນີ້ ເພື່ອ ວ່າ [ກ]ຕົນ
ເອງ ຈະ ໄດ້ອອກໄປໃນບັນດາຜູ້ຄົນ ຂອງ
ເພິ່ນ ຫລື ໃນບັນດາຜູ້ຄົນຂອງນີໄຟ, ເພື່ອ
ເພິ່ນຈະໄດ້ສັ່ງສອນ [ຂ]ພຣະຄຳຂອງພຣະ
ເຈົ້າແກ່ພວກເຂົາເພື່ອ [ຄ]ກະຕຸ້ນພວກເຂົາ
ໃຫ້ [ງ]ສຳນຶກເຖິງໜ້າທີ່ຂອງພວກເຂົາ, ແລະ
ໂດຍພຣະຄຳຂອງພຣະເຈົ້າ, ເພິ່ນຈະໄດ້
ດຶງເອົາຄວາມທະນົງຕົວ ແລະ ກົນອຸບາຍ
ທັງໝົດ ແລະ ການຂັດແຍ້ງທັງໝົດ ຊຶ່ງມີ
ຢູ່ໃນບັນດາຜູ້ຄົນຂອງເພິ່ນລົງມາ, ໂດຍບໍ່
ເຫັນທາງອື່ນແລ້ວທີ່ເພິ່ນຈະກູ້ພວກເຂົາ

12 *ກ* ອຊຢ 3:14;
ຢຄ 2:17.
*ຂ* ມຊຢ 4:26.
13 *ກ* ຄມພ ໃຫ້ທານ,
ການໃຫ້ທານ.
*ຂ* ຄມພ ຍາກລຳບາກ,
ຄວາມຍາກລຳບາກ.
*ຄ* 2 ກຣທ 12:10.
14 *ກ* ມຊຢ 4:12;
ແອວ 5:26–35.
ຄມພ ຮັບຮອງ,
ການຮັບຮອງ.
*ຂ* ຄມພ ຊື່ນຊົມ,
ຄວາມຊື່ນຊົມ.
15 *ກ* ຄພ 38:27; 49:20.
16 *ກ* ແອວ 2:3–7.
*ຂ* ແອວ 1:1, 14, 18.
17 *ກ* ແອວ 50:37.
19 *ກ* ແອວ 7:1.
*ຂ* ແອວ 31:5;
ຄພ 11:21–22.
*ຄ* ອນ 1:23.
*ງ* ມຊຢ 1:17;
ຣລມ 12:3.

ກັບຄືນ ນອກຈາກເພິ່ນຈະພະຍາຍາມຢ່າງ
ເຕັມທີ່ດ້ວຍ [j]ປະຈັກພະຍານອັນບໍລິສຸດ
ເພື່ອຕຳນິພວກເຂົາ.
20 ແລະ ດັ່ງນີ້ ໃນຕົ້ນປີທີເກົ້າແຫ່ງການ
ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງ
ນີໄຟ, ແອວມາຈຶ່ງໄດ້ມອບບັນລັງຕັດສິນ
ໃຫ້ [a]ນີໄຟຮາ, ແລະ ເພິ່ນຈະປະຕິບັດຕົນ
ສະເພາະແຕ່ໃນ [b]ຖານະປະໂລຫິດສູງເທົ່າ
ນັ້ນ ແຫ່ງລະບຽບອັນສັກສິດຂອງພຣະເຈົ້າ,
ໃນການເປັນພະຍານເຖິງພຣະຄຳຕາມ
ພຣະວິນຍານແຫ່ງການເປີດເຜີຍ ແລະ
ການທຳນາຍ.

---

ຄຳເວົ້າຂອງແອວມາຜູ້ເປັນມະຫາປະໂລ
ຫິດຕາມລະບຽບອັນສັກສິດຂອງພຣະເຈົ້າ
ໄດ້ປະກາດຕໍ່ຜູ້ຄົນຢູ່ໃນເມືອງ ແລະ ໝູ່
ບ້ານຕ່າງໆທົ່ວແຜ່ນດິນ.

*ເລີ່ມຕົ້ນດ້ວຍບົດທີ 5.*

## ບົດທີ 5

*ກ່ອນຈະໄດ້ຮັບຄວາມລອດ, ມະນຸດຕ້ອງ
ກັບໃຈ ແລະ ຮັກສາພຣະບັນຍັດ, ເກີດ
ໃໝ່, ຊຳລະອາພອນໃຫ້ສະອາດໂດຍໂລ
ຫິດຂອງພຣະຄຣິດ, ເປັນຄົນຖ່ອມຕົວ
ແລະ ຖອດຄວາມທະນົງຕົວ ແລະ ຄວາມ
ອິດສາບັງບຽດ ອອກຈາກຕົນ, ແລະ ກະ
ທຳໃນສິ່ງທີ່ຊອບທຳ—ຜູ້ລ້ຽງທີ່ດີຮ້ອງຫາຜູ້
ຄົນຂອງພຣະອົງ—ຜູ້ທີ່ເຮັດຄວາມຊົ່ວເປັນ
ລູກຫລານຂອງມານ—ແອວມາໃຫ້ປະຈັກ
ພະຍານເຖິງຄວາມຈິງຂອງຄຳສອນຂອງ
ເພິ່ນ ແລະ ສັ່ງໃຫ້ຜູ້ຄົນກັບໃຈ—ຊື່ຂອງຜູ້ທີ່
ຊອບທຳຈະຖືກບັນທຶກໄວ້ໃນທະບຽນແຫ່ງ
ຊີວິດ. ປະມານ 83 ປີ ກ່ອນ ຄ.ສ.*

1 ບັດ ນີ້ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ແອວມາເລີ່ມ [a]ປະກາດພຣະຄຳຂອງ
[b]ພຣະເຈົ້າແກ່ຜູ້ຄົນ, ທຳອິດຢູ່ໃນແຜ່ນ
ດິນເຊຣາເຮັມລາ, ແລະ ຫລັງຈາກນັ້ນໄປ
ຕະຫລອດທົ່ວແຜ່ນດິນ.
2 ແລະ ນີ້ຄືຄຳຊຶ່ງແອວມາໄດ້ເວົ້າກັບຜູ້
ຄົນໃນສາດສະໜາຈັກ ຊຶ່ງສະຖາປະນາ
ຂຶ້ນຢູ່ໃນເມືອງເຊຣາເຮັມລາ, ຕາມບັນທຶກ
ຂອງເພິ່ນເອງ, ມີຄວາມວ່າ:
3 ຂ້າພະເຈົ້າແອວມາໄດ້ຮັບ [a]ແຕ່ງຕັ້ງ
ໂດຍແອວມາບິດາຂອງຂ້າພະເຈົ້າໃຫ້ເປັນ
[b]ມະຫາປະໂລຫິດດູແລສາດສະໜາຈັກ
ຂອງພຣະເຈົ້າ, ໂດຍທີ່ເພິ່ນມີອຳນາດ ແລະ
[c]ສິດອຳນາດຈາກພຣະເຈົ້າຊຶ່ງໃຫ້ເຮັດວຽກ
ງານເຫລົ່ານີ້, ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ເພິ່ນໄດ້ເລີ່ມຕົ້ນສະຖາ
ປະນາສາດສະໜາຈັກໃນ [d]ແຜ່ນດິນ ຊຶ່ງ
ຢູ່ໃນຊາຍແດນນີໄຟ; ແທ້ຈິງແລ້ວ, ແຜ່ນ
ດິນທີ່ມີຊື່ວ່າແຜ່ນດິນມໍມອນ; ແທ້ຈິງແລ້ວ,
ເພິ່ນໄດ້ໃຫ້ບັບຕິສະມາແກ່ພີ່ນ້ອງຂອງ
ເພິ່ນໃນນ້ຳມໍມອນ.
4 ແລະ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບ
ພວກທ່ານວ່າ ເຂົາເຈົ້າຖືກ [a]ປົດປ່ອຍໃຫ້
ພົ້ນຈາກກຳມືຂອງຜູ້ຄົນຂອງກະສັດໂນອາ
ໂດຍພຣະເມດຕາ ແລະ ອຳນາດຂອງພຣະ
ເຈົ້າ.

---

19 *ຈ* ຄມພ ປະຈັກພະຍານ.
20 *ກ* ແອວ 8:12.
*ຂ* ມຊຢ 29:42; ແອວ 5:3, 44, 49.
**5** 1 *ກ* ແອວ 4:19.
*ຂ* ແອວ 5:61.
3 *ກ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* ແອວ 4:4, 18, 20.
*ຄ* ມຊຢ 18:13; 3 ນຟ 11:25.
*ງ* ມຊຢ 18:4; 3 ນຟ 5:12.
4 *ກ* ມຊຢ 23:1–3.

5 ແລະ ຈົ່ງເບິ່ງ, ຫລັງຈາກນັ້ນ ເຂົາເຈົ້າ
ຖືກນຳໄປສູ່ [ກ]ຄວາມເປັນທາດໃນຖິ່ນແຫ້ງ
ແລ້ງກັນດານດ້ວຍມືຂອງຊາວເລມັນ; ແທ້
ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານ
ວ່າ, ເຂົາເຈົ້າຢູ່ໃນຄວາມເປັນຊະເລີຍ,
ແລະ ພຣະຜູ້ເປັນເຈົ້າ ໄດ້ປົດປ່ອຍ ເຂົາ
ເຈົ້າອອກຈາກ [ຂ]ຄວາມເປັນທາດອີກໂດຍ
ອຳນາດຂອງພຣະຄຳຂອງພຣະອົງ, ແລະ
ພວກເຮົາຈຶ່ງຖືກນຳມາຫາແຜ່ນດິນນີ້, ແລະ
ໃນບ່ອນນີ້ຊຶ່ງພວກເຮົາເລີ່ມສະຖະປະນາ
ສາດສະໜາຈັກຂອງພຣະເຈົ້າຂຶ້ນທົ່ວແຜ່ນ
ດິນນຳອີກ.
6 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບ ພວກທ່ານພີ່ນ້ອງຂອງ ຂ້າ ພະເຈົ້າ,
ພວກທ່ານທີ່ເປັນຂອງສາດສະໜາຈັກນີ້
ພວກທ່ານໄດ້ເກັບຄວາມເປັນຊະເລີຍຂອງ
ບັນພະບຸລຸດຂອງພວກທ່ານໄວ້ພຽງພໍຫລື
ບໍ່ໃນຄວາມຊົງຈຳ? ແທ້ຈິງແລ້ວ, ແລະ ໄດ້
ເກັບພຣະເມດຕາ ແລະ ຄວາມອົດກັ້ນຂອງ
ພຣະອົງທີ່ມີຕໍ່ເຂົາເຈົ້າໄວ້ພຽງພໍຫລືບໍ່ໃນ
ຄວາມຊົງຈຳ? ແລະ ຍິ່ງໄປກວ່ານັ້ນ, ພວກ
ທ່ານໄດ້ເກັບກຳໄວ້ພຽງພໍຫລືບໍ່ໃນຄວາມ
ຊົງຈຳ ວ່າພຣະອົງໄດ້ປົດປ່ອຍຈິດວິນຍານ
ຂອງເຂົາເຈົ້າໃຫ້ພົ້ນຈາກນະລົກແລ້ວ?
7 ຈົ່ງເບິ່ງ, ພຣະອົງໄດ້ປ່ຽນໃຈຂອງເຂົາ
ເຈົ້າ; ແທ້ຈິງແລ້ວ, ພຣະອົງໄດ້ປຸກໃຫ້ເຂົາ
ເຈົ້າຕື່ນຈາກການນອນຫລັບສະໜິດ, ແລະ
ເຂົາເຈົ້າໄດ້ຕື່ນຂຶ້ນມາຫາພຣະເຈົ້າ. ຈົ່ງ
ເບິ່ງ, ເຂົາເຈົ້າຢູ່ໃນທ່າມກາງຄວາມມືດ;
ເຖິງຢ່າງໃດກໍຕາມ, ຈິດວິນຍານຂອງເຂົາ
ເຈົ້າຍັງສະຫວ່າງສະໄຫວດ້ວຍຄວາມສະ
ຫວ່າງຂອງພຣະຄຳອັນເປັນນິດ; ແທ້ຈິງ
ແລ້ວ, ເຂົາເຈົ້າໄດ້ຖືກລ້ອມໄວ້ດ້ວຍ [ກ]ສາຍ
ຮັດແຫ່ງຄວາມຕາຍ ແລະ [ຂ]ສາຍໂສ້ແຫ່ງ
ນະລົກ, ແລະ ຄວາມພິນາດອັນເປັນນິດໄດ້
ຄອຍຖ້າເຂົາເຈົ້າຢູ່.
8 ແລະ ບັດນີ້ຂ້າພະເຈົ້າຂໍຖາມພວກ
ທ່ານພີ່ນ້ອງຂອງຂ້າພະເຈົ້າວ່າ ເຂົາເຈົ້າ
ໄດ້ຖືກທຳລາຍບໍ? ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ, ບໍ່ເລີຍ, ເຂົາເຈົ້າບໍ່ໄດ້
ຖືກທຳລາຍ.
9 ແລະ ຂ້າພະເຈົ້າຂໍຖາມອີກວ່າ ສາຍ
ຮັດແຫ່ງຄວາມຕາຍຂາດອອກແລ້ວບໍ,
ແລະ ສາຍໂສ້ແຫ່ງນະລົກ ຊຶ່ງລ້ອມເຂົາ
ເຈົ້າໄວ້ນັ້ນຫລຸດອອກແລ້ວບໍ? ຂ້າພະເຈົ້າ
ກ່າວກັບພວກທ່ານວ່າ, ແທ້ຈິງແລ້ວ, ມັນ
ໄດ້ຫລຸດອອກແລ້ວ, ແລະ ຈິດວິນຍານ
ຂອງເຂົາເຈົ້າໄດ້ຂະຫຍາຍຂຶ້ນ, ແລະ ເຂົາ
ເຈົ້າໄດ້ຮ້ອງສັນລະເສີນຄວາມຮັກທີ່ໄຖ່.
ແລະ ຂ້າພະເຈົ້າກ່າວກັບພວກທ່ານວ່າ
ເຂົາເຈົ້າລອດແລ້ວ.
10 ແລະ ບັດນີ້ຂ້າພະເຈົ້າຂໍຖາມພວກ
ທ່ານວ່າ ເຂົາເຈົ້າ [ກ]ລອດດ້ວຍເງື່ອນໄຂອັນ
ໃດ? ແທ້ຈິງແລ້ວ, ເຂົາເຈົ້າມີເຫດຜົນອັນ
ໃດທີ່ຈະຫວັງໃນຄວາມລອດ? ແມ່ນຫຍັງ
ທີ່ເປັນເຫດໃຫ້ເຂົາເຈົ້າຫລຸດພົ້ນຈາກສາຍ
ຮັດແຫ່ງຄວາມຕາຍ, ແທ້ຈິງແລ້ວ, ແລະ
ຈາກສາຍໂສ້ແຫ່ງນະລົກນັ້ນ?
11 ຈົ່ງເບິ່ງ, ຂ້າພະເຈົ້າບອກພວກທ່ານ
ວ່າ—ແອວມາບິດາຂອງຂ້າພະເຈົ້າບໍ່ໄດ້
ເຊື່ອໃນຄຳ ຊຶ່ງປະກາດໂດຍປາກຂອງ
[ກ]ອະບີນາໄດບໍ? ແລະ ເພິ່ນບໍ່ແມ່ນສາດ
ສະດາຜູ້ບໍລິສຸດບໍ? ເພິ່ນບໍ່ໄດ້ເວົ້າພຣະຄຳ
ຂອງພຣະເຈົ້າບໍ, ແລະ ແອວມາບິດາຂອງ
ຂ້າພະເຈົ້າໄດ້ເຊື່ອຖ້ອຍຄຳເຫລົ່ານັ້ນບໍ?
12 ແລະ ຕາມສັດທາຂອງເພິ່ນ, ຈຶ່ງມີ

5 *ກ* ມຊຢ 23:37–39; 24:8–15.
*ຂ* ມຊຢ 24:17.
7 *ກ* ມຊຢ 15:8.
*ຂ* ແອວ 12:11; ຄພ 138:23.
10 *ກ* ຄນພ ແຜນແຫ່ງການໄຖ່; ລອດ, ຄວາມລອດ.
11 *ກ* ມຊຢ 17:1–4.

[ກ]ການປ່ຽນແປງອັນຍິ່ງໃຫຍ່ເກີດຂຶ້ນໃນ
ໃຈຂອງເພິ່ນ. ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບ
ພວກທ່ານວ່າ ທັງໝົດນີ້ເປັນຄວາມຈິງ.
13 ແລະ ຈົ່ງເບິ່ງ, ເພິ່ນໄດ້ [ກ]ສັ່ງສອນ
ພຣະຄຳໃຫ້ແກ່ບັນພະບຸລຸດຂອງພວກ
ທ່ານ, ແລະ ການປ່ຽນແປງອັນຍິ່ງໃຫຍ່ກໍ
ເກີດຂຶ້ນໃນໃຈຂອງເຂົາເຈົ້າຄືກັນ, ແລະ
ເຂົາເຈົ້າໄດ້ຖ່ອມຕົວ ແລະ [ຂ]ໄວ້ວາງໃຈໃນ
[ຄ]ພຣະເຈົ້າອົງທ່ຽງແທ້ ແລະ ຊົງພຣະຊົນຢູ່.
ແລະ ຈົ່ງເບິ່ງ, ເຂົາເຈົ້າຊື່ສັດຈົນເຖິງ [ງ]ວັນ
ຕາຍ; ສະນັ້ນເຂົາເຈົ້າຈຶ່ງລອດ.
14 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຂໍຖາມ
ພວກທ່ານພີ່ນ້ອງຂອງຂ້າພະເຈົ້າໃນສາດ
ສະໜາຈັກວ່າ ພວກທ່ານໄດ້ [ກ]ເກີດຈາກ
ພຣະເຈົ້າທາງວິນຍານແລ້ວບໍ? ພວກທ່ານ
ໄດ້ຮັບເງົາຂອງພຣະອົງໄວ້ໃນໃບໜ້າຂອງ
ພວກທ່ານແລ້ວບໍ? ພວກທ່ານເຄີຍປະສົບ
[ຂ]ການປ່ຽນແປງອັນຍິ່ງໃຫຍ່ນີ້ໃນໃຈຂອງ
ພວກທ່ານແລ້ວບໍ?
15 ພວກທ່ານໃຊ້ສັດທາໃນການໄຖ່
ຂອງພຣະອົງຜູ້ [ກ]ສ້າງພວກທ່ານບໍ? ພວກ
ທ່ານໄດ້ຄອຍຖ້າດ້ວຍຕາແຫ່ງສັດທາບໍ່
ແລະ ຫລຽວເບິ່ງຮ່າງກາຍທີ່ເປັນມະຕະນີ້
ຖືກ [ຂ]ຍົກຂຶ້ນໄປຫາຄວາມເປັນອະມະຕະ,
ແລະ ຄວາມເນົ່າເປື່ອຍນີ້ຖືກຍົກຂຶ້ນໄປຫາ
ຄວາມບໍ່ເນົ່າເປື່ອຍເພື່ອຢືນຢູ່ຕໍ່ພຣະພັກ
ຂອງພຣະເຈົ້າ, ເພື່ອຮັບ [ຄ]ການພິພາກສາ
ຕາມການກະທຳຊຶ່ງເຮັດໄວ້ເມື່ອຢູ່ໃນຮ່າງ
ກາຍທີ່ເປັນມະຕະນີ້?
16 ຂ້າພະເຈົ້າກ່າວກັບພວກທ່ານວ່າ,
ພວກທ່ານຄິດເອງໄດ້ບໍວ່າ ພວກທ່ານໄດ້
ຍິນສຸລະສຽງຂອງພຣະຜູ້ເປັນເຈົ້າກ່າວກັບ
ພວກທ່ານໃນມື້ນັ້ນວ່າ: ຈົ່ງມາຫາເຮົາເຖີດ
ເຈົ້າ [ກ]ເປັນສຸກແລ້ວ, ເພາະຈົ່ງເບິ່ງ, ວຽກ
ງານຂອງເຈົ້າເປັນວຽກງານທີ່ຊອບທຳໃນ
ຜືນແຜ່ນດິນໂລກ?
17 ຫລື ພວກທ່ານຄິດເອງໄດ້ບໍວ່າ ພວກ
ທ່ານຈະເວົ້າຕົວະຕໍ່ພຣະເຈົ້າໄດ້ໃນມື້ນັ້ນ,
ແລະ [ກ]ທູນວ່າ—ພຣະອົງເຈົ້າເອີຍ, ວຽກ
ງານຂອງຂ້ານ້ອຍເປັນວຽກງານທີ່ຊອບ
ທຳໃນຜືນແຜ່ນດິນໂລກ—ແລະ ວ່າພຣະ
ອົງຈະຊ່ວຍພວກທ່ານໃຫ້ລອດ?
18 ຫລື ອີກປະການໜຶ່ງ, ພວກທ່ານ
ເຫັນຕົວເອງໄດ້ບໍວ່າ ພວກທ່ານຖືກນຳ
ມາຢູ່ໜ້າສານຂອງພຣະເຈົ້າ ຊຶ່ງຈິດວິນ
ຍານຂອງພວກທ່ານເຕັມໄປດ້ວຍຄວາມ
ຮູ້ສຶກຜິດ ແລະ ຄວາມສຳນຶກຜິດ, ໂດຍມີ
ຄວາມຊົງຈຳເຖິງຄວາມຜິດທັງໝົດຂອງ
ພວກທ່ານ, ແທ້ຈິງແລ້ວ, [ກ]ຄວາມຊົງຈຳ
ເປັນຢ່າງດີເຖິງຄວາມຊົ່ວຮ້າຍທັງໝົດ
ຂອງພວກທ່ານ, ແທ້ຈິງແລ້ວ, ຄວາມຊົງ
ຈຳທີ່ພວກທ່ານໄດ້ຕໍ່ຕ້ານພຣະບັນຍັດ
ຂອງພຣະເຈົ້າ?
19 ຂ້າພະເຈົ້າກ່າວກັບພວກທ່ານວ່າ
ພວກທ່ານຈະເງີຍໜ້າເບິ່ງພຣະເຈົ້າໃນ
ມື້ນັ້ນດ້ວຍໃຈອັນບໍລິສຸດ ແລະ ດ້ວຍມືທີ່

12 *ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
13 *ກ* ມຊຢ 18:7.
*ຂ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
*ຄ* ມມ 9:28; ຄພ 20:19.
*ງ* ຄມພ ອົດທົນ, ຄວາມອົດທົນ.
14 *ກ* ມຊຢ 27:24–27; ແອວ 22:15. ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.
*ຂ* ຣມ 8:11–17; ມຊຢ 5:2; ມຊ 6:65. ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
15 *ກ* ຄມພ ສ້າງ, ການສ້າງ.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຄ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
16 *ກ* ມທ 25:31–46.
17 *ກ* 3 ນຟ 14:21–23.
18 *ກ* ອຊກ 20:43; 2 ນຟ 9:14; ມຊຢ 3:25; ແອວ 11:43.

ສະອາດໄດ້ບໍ? ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຈະເງີຍຂຶ້ນດ້ວຍໃບໜ້າທີ່ມີ [ກ]ເງົາຂອງພຣະເຈົ້າຊຶ່ງຈາລຶກໄວ້ໃນໃບໜ້າຂອງພວກທ່ານໄດ້ບໍ?

20 ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຄິດເຖິງຄວາມລອດໄດ້ບໍ ເມື່ອພວກທ່ານ [ກ]ຍອມຕົນຂຶ້ນຢູ່ກັບມານ?

21 ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຈະຮູ້ໃນມື້ນັ້ນວ່າ ພວກທ່ານຈະ [ກ]ລອດບໍ່ໄດ້ ເພາະວ່າບໍ່ມີມະນຸດຄົນໃດທີ່ຈະລອດໄດ້ ຖ້າບໍ່ຊໍາລະ [ຂ]ອາພອນຂອງເຂົາໃຫ້ຂາວສະອາດເສຍກ່ອນ; ແທ້ຈິງແລ້ວ, ຕ້ອງເຮັດໃຫ້ອາພອນຂອງເຂົາ [ຄ]ບໍລິສຸດຈົນມັນສະອາດຈາກຮອຍເປື້ອນທັງໝົດໂດຍໂລຫິດຂອງພຣະອົງ, ຜູ້ທີ່ບັນພະບຸລຸດຂອງພວກເຮົາໄດ້ເວົ້າເຖິງ, ຜູ້ທີ່ຈະມາໄຖ່ຜູ້ຄົນຂອງພຣະອົງຈາກບາບຂອງພວກເຂົາ.

22 ແລະ ບັດນີ້ຂ້າພະເຈົ້າຂໍຖາມພວກທ່ານ ພີ່ນ້ອງຂອງຂ້າພະເຈົ້າ ວ່າ ພວກທ່ານຈະຮູ້ສຶກແນວໃດຖ້າຫາກພວກທ່ານໄດ້ຢືນຢູ່ຕໍ່ໜ້າບ່ອນພິພາກສາຂອງພຣະເຈົ້າ ແລະ ອາພອນຂອງພວກທ່ານເປື້ອນ [ກ]ເລືອດ ແລະ ເຕັມໄປດ້ວຍ [ຂ]ຄວາມສົກກະປົກຕ່າງໆນາໆ? ຈົ່ງເບິ່ງ, ສິ່ງເຫລົ່ານີ້ຈະເປັນຫລັກຖານຟ້ອງຫຍັງແດ່ຕໍ່ຕ້ານພວກທ່ານ?

23 ຈົ່ງເບິ່ງ, ມັນຈະບໍ່ [ກ]ເປັນຫລັກຖານບໍວ່າ ພວກທ່ານເປັນຄາດຕະກອນ, ແທ້ຈິງແລ້ວ, ແລະ ວ່າພວກທ່ານມີຄວາມຜິດກ່ຽວກັບຄວາມຊົ່ວຮ້າຍຕ່າງໆນາໆອີກບໍ?

24 ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າ, ພວກທ່ານຄິດບໍວ່າຄົນເຊັ່ນນັ້ນຈະມີບ່ອນນັ່ງຢູ່ໃນອານາຈັກຂອງພຣະເຈົ້າຮ່ວມກັບ [ກ]ອັບຣາຮາມ, ຮ່ວມກັບອີຊາກ, ແລະ ຮ່ວມກັບຢາໂຄບ, ແລະ ຮ່ວມກັບສາດສະດາຜູ້ບໍລິສຸດທັງຫລາຍ, ຊຶ່ງອາພອນຂອງຄົນເຫລົ່ານັ້ນສະອາດ ແລະ ບໍ່ມີມົນທິນ, ບໍລິສຸດ ແລະ ຂາວສະອາດ?

25 ຂ້າພະເຈົ້າກ່າວກັບພວກທ່ານວ່າ, ບໍ່ເລີຍ; ເວັ້ນເສຍແຕ່ພວກທ່ານຈະເຮັດໃຫ້ພຣະຜູ້ສ້າງຂອງພວກເຮົາເປັນຜູ້ເວົ້າຕົວະນັບຕັ້ງແຕ່ຕົ້ນ, ຫລື ຄິດວ່າພຣະອົງເປັນຜູ້ເວົ້າຕົວະນັບຕັ້ງແຕ່ຕົ້ນ, ພວກທ່ານຈະບໍ່ຄິດວ່າຄົນເຊັ່ນນັ້ນຈະມີບ່ອນອາໄສໃນອານາຈັກສະຫວັນໄດ້; ແຕ່ພວກເຂົາຈະຖືກຂັບໄລ່ອອກໄປເພາະວ່າພວກເຂົາເປັນ [ກ]ລູກຫລານຂອງອານາຈັກຂອງມານ.

26 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານພີ່ນ້ອງຂອງຂ້າພະເຈົ້າວ່າ ຖ້າຫາກພວກທ່ານເຄີຍປະສົບກັບ [ກ]ການປ່ຽນແປງໃນໃຈ ແລະ ຖ້າຫາກພວກທ່ານຮູ້ສຶກຢາກຮ້ອງ [ຂ]ເພງສັນລະເສີນຄວາມຮັກທີ່ໄຖ່, ຂ້າພະເຈົ້າຈະຖາມວ່າ ພວກທ່ານ [ຄ]ສາມາດຮູ້ສຶກເຊັ່ນນັ້ນບໍ່ໃນຂະນະນີ້?

27 ພວກທ່ານໄດ້ເດີນໄປໂດຍການຮັກສາຕົນເອງ [ກ]ບໍ່ໃຫ້ມີຂໍ້ຕໍານິຕໍ່ພຣະພັກຂອງພຣະເຈົ້າບໍ? ຖ້າຫາກພວກທ່ານຖືກເອີ້ນໃຫ້ຕາຍໃນເວລານີ້, ພວກທ່ານຈະກ່າວໄດ້ບໍພາຍໃນຕົວຂອງພວກທ່ານວ່າ ພວກ

19 *ກ* 1 ຢຮ 3:1–3.
20 *ກ* ມຊຢ 2:32.
21 *ກ* ຄມພ ລອດ, ຄວາມລອດ.
*ຂ* 1 ນຟ 12:10; ແອວ 13:11–13; 3 ນຟ 27:19–20.
*ຄ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
22 *ກ* ອຊຢ 59:3.
*ຂ* ຄມພ ສົກກະປົກ, ຄວາມສົກກະປົກ.
23 *ກ* ອຊຢ 59:12.
24 *ກ* ລກ 13:28.
25 *ກ* 2 ນຟ 9:9.
26 *ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
*ຂ* ແອວ 26:13.
*ຄ* ມຊຢ 4:12; ຄພ 20:31–34.
27 *ກ* ຄມພ ຮັບຮອງ, ການຮັບຮອງ.

ທ່ານ [ຂ]ຖ່ອມຕົວພຽງພໍແລ້ວ? ວ່າອາພອນ
ຂອງພວກທ່ານນັ້ນສະອາດ ແລະ ຂາວ
ແລ້ວດ້ວຍໂລຫິດຂອງພຣະຄຣິດຜູ້ຈະສະ
ເດັດມາ [ຄ]ໄຖ່ຜູ້ຄົນຂອງພຣະອົງຈາກບາບ
ຂອງພວກເຂົາ?
28 ຈົ່ງ ເບິ່ງ, ພວກ ທ່ານ ຖອດ [ກ]ຄວາມ
ທະນົງຕົວອອກແລ້ວບໍ? ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ຖ້າຫາກພວກທ່ານຍັງບໍ່
ໄດ້ຖອດມັນອອກ, ພວກທ່ານກໍຍັງບໍ່ພ້ອມ
ທີ່ຈະພົບກັບພຣະເຈົ້າເທື່ອ. ຈົ່ງເບິ່ງ ພວກ
ທ່ານຕ້ອງຕຽມຢ່າງໄວ ເພາະອານາຈັກ
ສະຫວັນຈະມາເຖິງໃນບໍ່ຊ້ານີ້ ແລະ ຄົນ
ເຊັ່ນນັ້ນຈະບໍ່ມີຊີວິດນິລັນດອນ.
29 ຈົ່ງເບິ່ງ, ຂ້າພະເຈົ້າກ່າວວ່າ, ມີໃຜ
ແດ່ໃນບັນດາພວກທ່ານທີ່ຍັງບໍ່ໄດ້ຖອດ
[ກ]ຄວາມອິດສາອອກເທື່ອ? ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ຄົນເຊັ່ນນັ້ນຍັງບໍ່ຕຽມ
ພ້ອມເທື່ອ; ແລະ ຂ້າພະເຈົ້າຂໍໃຫ້ເຂົາຕຽມ
ຕົວຢ່າງໄວເພາະຊົ່ວໂມງໃກ້ເຂົ້າມາແລ້ວ,
ແລະ ເຂົາບໍ່ຮູ້ວ່າເມື່ອໃດເວລານັ້ນຈະມາ
ເຖິງ; ເພາະຄົນເຊັ່ນນັ້ນຈະບໍ່ຖືກພົບວ່າ
ປາດສະຈາກຄວາມຜິດ.
30 ແລະ ອີກຢ່າງໜຶ່ງ ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ, ມີໃຜແດ່ໃນບັນດາພວກ
ທ່ານທີ່ກະທຳໃຫ້ພີ່ນ້ອງຂອງຕົນເປັນທີ່
[ກ]ເຍາະເຍີ້ຍ, ຫລື ທຸ້ມເທການຂົ່ມເຫັງລົງ
ໃສ່ເຂົາ?
31 ວິບັດແກ່ຄົນເຊັ່ນນັ້ນ, ເພາະເຂົາຍັງບໍ່
ຕຽມພ້ອມເທື່ອ, ແລະ ເວລາໃກ້ເຂົ້າມາເຖິງ
ແລ້ວທີ່ພວກເຂົາຈະຕ້ອງກັບໃຈ ຖ້າບໍ່ດັ່ງ
ນັ້ນພວກເຂົາຈະລອດບໍ່ໄດ້!
32 ແທ້ຈິງແລ້ວ, ເຖິງແມ່ນວິບັດແກ່ທຸກ
ຄົນ [ກ]ຜູ້ທີ່ເຮັດຄວາມຊົ່ວຮ້າຍ; ຈົ່ງກັບໃຈ,
ຈົ່ງກັບໃຈເຖີດ, ເພາະອົງພຣະຜູ້ເປັນເຈົ້າ
ໄດ້ຮັບສັ່ງເລື່ອງນີ້!
33 ຈົ່ງ ເບິ່ງ, ພຣະອົງໄດ້ສົ່ງຄຳເຊີນມາ
ຫາມະນຸດ [ກ]ທັງປວງ, ເພາະ [ຂ]ພຣະພາຫາ
ແຫ່ງຄວາມເມດຕາຂອງພຣະອົງໄດ້ເດ່
ອອກມາຫາພວກເຂົາ, ແລະ ພຣະອົງໄດ້
ກ່າວວ່າ: ຈົ່ງກັບໃຈເຖີດ, ແລະ ເຮົາຈະຮັບ
ເຈົ້າໄວ້.
34 ແທ້ຈິງແລ້ວ, ພຣະອົງໄດ້ກ່າວວ່າ: ຈົ່ງ
[ກ]ມາຫາເຮົາ ແລະ ເຈົ້າຈະຮັບ [ຂ]ໝາກໄມ້
ຈາກຕົ້ນໄມ້ແຫ່ງຊີວິດ; ແທ້ຈິງແລ້ວ, ເຈົ້າ
ຈະກິນ [ຄ]ເຂົ້າ ແລະ ດື່ມນ້ຳແຫ່ງຊີວິດຢ່າງ
ມີ [ງ]ອິດສະລະ;
35 ແທ້ຈິງແລ້ວ, ຈົ່ງມາຫາເຮົາ ແລະ ຈົ່ງ
ນຳເອົາວຽກງານແຫ່ງຄວາມຊອບທຳມາ,
ແລະ ເຈົ້າຈະບໍ່ຖືກໂຄ່ນລົງ ແລະ ໂຍນເຂົ້າ
ກອງໄຟ—
36 ເພາະຈົ່ງເບິ່ງ, ເວລາໃກ້ເຂົ້າມາເຖິງ
ແລ້ວຖ້າຜູ້ໃດກໍຕາມທີ່ບໍ່ [ກ]ນຳເອົາຜົນດີ
ອອກມາ, ຫລື ຜູ້ໃດກໍຕາມທີ່ບໍ່ທຳງານແຫ່ງ
ຄວາມຊອບທຳ, ຜູ້ນັ້ນຍ່ອມມີເຫດຜົນທີ່ຈະ
ຮ້ອງໄຫ້ ແລະ ເປັນທຸກ.
37 ໂອ້ ທ່ານຜູ້ສ້າງຄວາມຊົ່ວຮ້າຍເອີຍ;
ທ່ານທັງຫລາຍທີ່ອວດອົ່ງກັບ [ກ]ສິ່ງທີ່ບໍ່ມີ
ປະໂຫຍດຂອງໂລກ, ທ່ານທັງຫລາຍທີ່

27 *ຂ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຄ* ຄມພ ໄຖ່, ການໄຖ່, ຖືກໄຖ່.
28 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
29 *ກ* ຄມພ ອິດສາ.
30 *ກ* ຄມພ ເວົ້າຈາບໍ່ດີ.
32 *ກ* ພສສ 5:5.
33 *ກ* ແອວ 19:36; 3 ນຟ 18:25.
*ຂ* ຢຄ 6:5; 3 ນຟ 9:14.
34 *ກ* 2 ນຟ 26:24–28; 3 ນຟ 9:13–14.
*ຂ* 1 ນຟ 8:11; 15:36.
*ຄ* ຄມພ ອາຫານທິບ ແຫ່ງຊີວິດ.
*ງ* 2 ນຟ 9:50–51; ແອວ 42:27.
36 *ກ* ມທ 3:10; 7:15–20; 3 ນຟ 14:19; ຄພ 97:7.
37 *ກ* ຄມພ ອວດອົ່ງ, ຄວາມອວດອົ່ງ.

ບອກ ວ່າ ຕົວ ເອງ ຮູ້ ທາງ ແຫ່ງ ຄວາມ ຊອບ
ທຳ, ປານ ນັ້ນ ຍັງ [ຂ]ຫລົງ ທາງ ໄປ ເໝືອນ
[ຄ]ໂຕແກະທີ່ບໍ່ມີຜູ້ລ້ຽງ, ທັງທີ່ຜູ້ລ້ຽງໄດ້ [ງ]ເອີ້ນ
ຫາພວກທ່ານ ແລະ ຍັງເອີ້ນຫາພວກທ່ານ
ຢູ່, ແຕ່ພວກທ່ານບໍ່ຍອມ [ຈ]ເຊື່ອຟັງສຸລະ
ສຽງຂອງພຣະອົງເລີຍ!
38 ຈົ່ງ ເບິ່ງ, ຂ້າພະເຈົ້າກ່າວກັບພວກ
ທ່ານ ວ່າ [ກ]ຜູ້ ລ້ຽງທີ່ດີຄົນນັ້ນໄດ້ເອີ້ນຫາ
ພວກທ່ານຢູ່; ແທ້ຈິງແລ້ວ, ແລະ ໃນພຣະ
ນາມຂອງພຣະ ອົງເອງ ທີ່ພຣະ ອົງ ເອີ້ນ
ຫາພວກທ່ານ, ຊຶ່ງຄືພຣະນາມຂອງພຣະ
ຄຣິດ; ແລະ ຖ້າຫາກ ພວກທ່ານບໍ່ [ຂ]ເຊື່ອ
ຟັງສຸລະສຽງຂອງ [ຄ]ຜູ້ລ້ຽງທີ່ດີຕາມ [ງ]ຊື່ທີ່ໃຊ້
ເອີ້ນພວກທ່ານນັ້ນ, ຈົ່ງເບິ່ງ, ພວກທ່ານກໍບໍ່
ແມ່ນແກະຂອງຜູ້ລ້ຽງທີ່ດີຄົນນັ້ນ.
39 ແລະ ບັດ ນີ້ ຖ້າຫາກ ພວກທ່ານບໍ່
ແມ່ນແກະຂອງຜູ້ລ້ຽງທີ່ດີຄົນນັ້ນ, ພວກ
ທ່ານເປັນແກະຂອງ [ກ]ຝູງໃດ? ຈົ່ງເບິ່ງ, ຂ້າ
ພະເຈົ້າກ່າວກັບພວກທ່ານວ່າ [ຂ]ມານຄືຜູ້
ລ້ຽງຂອງພວກທ່ານ, ແລະ ພວກທ່ານເປັນ
ແກະຂອງມັນ; ແລະ ບັດນີ້, ໃຜຈະປະຕິ
ເສດເລື່ອງນີ້ໄດ້? ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ຜູ້ໃດກໍຕາມທີ່ປະຕິເສດ
ເລື່ອງນີ້ ຍ່ອມເປັນ [ຄ]ຄົນເວົ້າຕົວະ ແລະ
ເປັນ [ງ]ລູກຂອງມານ.
40 ເພາະຂ້າພະເຈົ້າກ່າວກັບພວກທ່ານ
ວ່າ ອັນໃດກໍຕາມທີ່ [ກ]ດີແມ່ນມາຈາກພຣະ
ເຈົ້າ, ແລະ ອັນໃດກໍຕາມທີ່ຊົ່ວແມ່ນມາ
ຈາກມານ.
41 ສະນັ້ນ, ຖ້າ ຫາກ ຄົນ ໜຶ່ງ ນຳ ເອົາ
[ກ]ວຽກງານດີອອກມາ ເຂົາຍ່ອມເຊື່ອຟັງສຽງ
ຂອງຜູ້ລ້ຽງທີ່ດີຄົນນັ້ນ ແລະ ເຂົາຍ່ອມຕິດ
ຕາມຄົນນັ້ນ; ແຕ່ຜູ້ໃດກໍຕາມທີ່ນຳເອົາວຽກ
ງານຊົ່ວອອກມາ, ຜູ້ນັ້ນກໍກາຍເປັນ [ຂ]ລູກ
ຂອງມານ ເພາະເຊື່ອຟັງສຽງຂອງມັນ ແລະ
ຕິດຕາມມັນໄປ.
42 ແລະ ຜູ້ໃດກໍຕາມທີ່ເຮັດແບບນີ້ຕ້ອງ
ໄດ້ຮັບ [ກ]ຄ່າຈ້າງຂອງຕົນ; ສະນັ້ນ, ສຳລັບ
[ຂ]ຄ່າຈ້າງຂອງເຂົາ, ເຂົາຈຶ່ງໄດ້ຮັບ [ຄ]ຄວາມ
ຕາຍໃນເລື່ອງທີ່ກ່ຽວກັບຄວາມຊອບທຳ,
ໂດຍທີ່ຕາຍຈາກວຽກງານດີທັງໝົດ.
43 ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າຢາກໃຫ້ພວກທ່ານຟັງຂ້າພະ
ເຈົ້າ, ເພາະວ່າຂ້າພະເຈົ້າເວົ້າດ້ວຍພະລັງ
ຂອງຈິດວິນຍານຂອງຂ້າພະເຈົ້າ; ຈົ່ງເບິ່ງ,
ຂ້າພະເຈົ້າເວົ້າກັບພວກທ່ານຢ່າງແຈ່ມ
ແຈ້ງ ເພື່ອພວກທ່ານຈະບໍ່ເຂົ້າໃຈຜິດ, ຫລື
ໄດ້ເວົ້າຕາມພຣະບັນຍັດຂອງພຣະເຈົ້າ.
44 ເພາະຂ້າພະເຈົ້າໄດ້ຖືກເອີ້ນໃຫ້ມາ
ເວົ້າຕາມນີ້, ຕາມ [ກ]ລະບຽບອັນສັກສິດຂອງ
ພຣະເຈົ້າ, ຊຶ່ງມີຢູ່ໃນພຣະຄຣິດພຣະເຢຊູ;
ແທ້ຈິງແລ້ວ, ຂ້າພະເຈົ້າໄດ້ຖືກບັນຊາໃຫ້
ມາຢືນຢັນ ແລະ ໃຫ້ຖ້ອຍຄຳແກ່ຜູ້ຄົນພວກ
ນີ້ເຖິງເລື່ອງທີ່ບັນພະບຸລຸດຂອງພວກເຮົາ

37 *ຂ* 2 ນຟ 12:5; 28:14; ມຊຢ 14:6.
*ຄ* ມທ 9:36.
*ງ* ສພສ 1:24–27; ອຊຢ 65:12.
*ຈ* ຢມຢ 26:4–5; ແອວ 10:6.
38 *ກ* ຄມພ ຜູ້ລ້ຽງທີ່ດີ.
*ຂ* ລລວ 26:14–20; ຄພ 101:7.
*ຄ* 3 ນຟ 15:24; 18:31.
*ງ* ມຊຢ 5:8; ແອວ 34:38.
39 *ກ* ມທ 6:24; ລກ 16:13.
*ຂ* ມຊຢ 5:10. ຄມພ ມານ.
*ຄ* 1 ຢຮ 2:22.
*ງ* 2 ນຟ 9:9.
40 *ກ* ອມນ 1:25; ອທ 4:12; ມຣນ 7:12, 15–17.
41 *ກ* 3 ນຟ 14:16–20. ຄມພ ວຽກງານ.
*ຂ* ມຊຢ 16:3–5; ແອວ 11:23.
42 *ກ* ແອວ 3:26–27; ຄພ 29:45.
*ຂ* ຣມ 6:23.
*ຄ* ຮລມ 14:16–18. ຄມພ ຄວາມຕາຍທາງວິນຍານ.
44 *ກ* ແອວ 13:6.

ໄດ້ກ່າວໄວ້ກ່ຽວກັບເລື່ອງທີ່ຈະມາເຖິງ.
45 ແລະ ນີ້ຍັງບໍ່ໝົດ. ພວກທ່ານບໍ່ຄິດບໍ
ວ່າ ຂ້າພະເຈົ້າເອງກໍ [ກ]ຮູ້ຈັກເຖິງເລື່ອງເຫລົ່າ
ນີ້ໂດຍຕົວຂອງຂ້າພະເຈົ້າເອງ? ຈົ່ງເບິ່ງ, ຂ້າ
ພະເຈົ້າຂໍເປັນພະຍານຕໍ່ພວກທ່ານວ່າ ຂ້າ
ພະເຈົ້າຮູ້ເລື່ອງເຫລົ່ານີ້ທີ່ຂ້າພະເຈົ້າເວົ້າມາ
ແລ້ວວ່າເປັນຄວາມຈິງ. ແລະ ພວກທ່ານ
ຄິດວ່າຂ້າພະເຈົ້າຮູ້ເຖິງຄວາມແນ່ນອນ
ຂອງເລື່ອງເຫລົ່ານີ້ໄດ້ແນວໃດ?
46 ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ເລື່ອງນີ້ເປັນທີ່ [ກ]ຮູ້ແກ່ຂ້າພະເຈົ້າ
ໂດຍພຣະວິນຍານສັກສິດຂອງພຣະເຈົ້າ.
ຈົ່ງເບິ່ງ, ຂ້າພະເຈົ້າໄດ້ [ຂ]ຖືສິນອົດເຂົ້າ
ແລະ ອະທິຖານມາຫລາຍມື້ ເພື່ອຂ້າພະ
ເຈົ້າຈະໄດ້ຮູ້ເລື່ອງເຫລົ່ານີ້ດ້ວຍຕົວເອງ.
ແລະ ບັດນີ້ຂ້າພະເຈົ້າຮູ້ໄດ້ດ້ວຍຕົວເອງ
ວ່າ ເລື່ອງເຫລົ່ານີ້ເປັນຄວາມຈິງ ເພາະອົງ
ພຣະຜູ້ເປັນເຈົ້າໄດ້ສະແດງມັນໃຫ້ປະຈັກ
ແກ່ຂ້າພະເຈົ້າໂດຍພຣະວິນຍານສັກສິດ
ຂອງພຣະອົງ; ແລະ ນີ້ຄືວິນຍານແຫ່ງ
[ຄ]ການເປີດເຜີຍ ຊຶ່ງຢູ່ໃນຂ້າພະເຈົ້າ.
47 ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າ
ກ່າວກັບພວກທ່ານວ່າ ຂ້າພະເຈົ້າໄດ້ຮັບ
ການເປີດເຜີຍດັ່ງນີ້ວ່າ ຄຳຊຶ່ງບັນພະບຸລຸດ
ຂອງພວກເຮົາເວົ້າໄວ້ນັ້ນເປັນຄວາມຈິງ
ແມ່ນແຕ່ຕາມວິນຍານແຫ່ງການທຳນາຍ
ຊຶ່ງມີຢູ່ໃນຂ້າພະເຈົ້າ, ຊຶ່ງເປັນໄປໂດຍການ
ສະແດງໃຫ້ປະຈັກຂອງພຣະວິນຍານຂອງ
ພຣະເຈົ້ານຳອີກ.
48 ຂ້າພະເຈົ້າກ່າວກັບພວກທ່ານວ່າ ຂ້າ
ພະເຈົ້າຮູ້ດ້ວຍຕົວເອງວ່າອັນໃດກໍຕາມທີ່
ຂ້າພະເຈົ້າຈະກ່າວກັບພວກທ່ານກ່ຽວກັບ
ສິ່ງທີ່ຈະມາເຖິງນັ້ນ ເປັນຄວາມຈິງ; ແລະ
ຂ້າພະເຈົ້າກ່າວກັບພວກທ່ານ ວ່າຂ້າພະ
ເຈົ້າຮູ້ວ່າ ພຣະເຢຊູຄຣິດຈະສະເດັດມາ,
ແທ້ຈິງແລ້ວ, ແມ່ນພຣະບຸດອົງດຽວທີ່ຖື
ກຳເນີດຈາກພຣະບິດາ, ເຕັມໄປດ້ວຍພຣະ
ຄຸນ ແລະ ພຣະເມດຕາ ແລະ ຄວາມຈິງ.
ແລະ ຈົ່ງເບິ່ງ, ພຣະອົງຈະສະເດັດມາເພື່ອ
ເອົາບາບຂອງໂລກໄປ, ແທ້ຈິງແລ້ວ, ບາບ
ຂອງທຸກຄົນທີ່ເຊື່ອຢ່າງແນ່ວແນ່ໃນພຣະ
ນາມຂອງພຣະອົງ.
49 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ນີ້ຄື [ກ]ຖານະຊຶ່ງຂ້າພະເຈົ້າຖືກ
ເອີ້ນມາ, ແທ້ຈິງແລ້ວ, ເພື່ອສັ່ງສອນພີ່ນ້ອງ
ທີ່ຮັກແພງຂອງຂ້າພະເຈົ້າ, ແລະ ທຸກຄົນ
ທີ່ຢູ່ໃນແຜ່ນດິນ ເພື່ອສັ່ງສອນຄົນທັງປວງ,
ທັງແກ່ ແລະ ໜຸ່ມ, ທັງຂ້າທາດ ແລະ ຜູ້ເປັນ
ອິດສະລະ; ແທ້ຈິງແລ້ວ, ຂ້າພະເຈົ້າກ່າວ
ກັບພວກທ່ານຜູ້ມີອາຍຸສູງ ແລະ ຜູ້ທີ່ມີອາຍຸ
ປານກາງ, ແລະ ຄົນລຸ້ນໃໝ່; ແທ້ຈິງແລ້ວ,
ເພື່ອອ້ອນວອນຕໍ່ພວກເຂົາວ່າ ພວກເຂົາ
ຕ້ອງກັບໃຈ ແລະ [ຂ]ເກີດໃໝ່.
50 ແທ້ຈິງແລ້ວ, ພຣະວິນຍານໄດ້ກ່າວ
ດັ່ງນີ້: ຈົ່ງກັບໃຈ, ເຈົ້າທັງຫລາຍທີ່ສຸດຂອງ
ແຜ່ນດິນໂລກ, ເພາະອານາຈັກສະຫວັນ
ໃກ້ຈະມາເຖິງໃນບໍ່ຊ້ານີ້; ແທ້ຈິງແລ້ວ,
ພຣະບຸດຂອງພຣະເຈົ້າຈະສະເດັດມາ
[ກ]ດ້ວຍລັດສະໝີພາບຂອງພຣະອົງ, ດ້ວຍ
ລິດເດດ, ເດຊານຸພາບ, ອຳນາດ ແລະ
ການຄອບຄອງຂອງພຣະອົງ. ແທ້ຈິງແລ້ວ,
ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະ

45 ກ ຄມພ ປະຈັກພະຍານ.
46 ກ 1 ກຣທ 2:9–16.
ຂ ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
ຄ ຄມພ ເປີດເຜີຍ, ການເປີດເຜີຍ.
49 ກ ຄມພ ຖານະປະໂລຫິດ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
ຂ ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.
50 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ລັດສະໝີພາບ.

ເຈົ້າກ່າວກັບພວກທ່ານວ່າ ພຣະວິນຍານ
ໄດ້ກ່າວໄວ້ວ່າ: ຈົ່ງເບິ່ງ ລັດສະໝີພາບຂອງ
[ຂ]ອິດສະຣາເອນແຫ່ງແຜ່ນດິນ ໂລກທັງໝົດ;
ແລະ ໃນໄວໆນີ້ອິດສະຣາເອນແຫ່ງສະຫວັນຈະ
ສ່ອງຄວາມສະຫວ່າງລົງມາເທິງບັນດາລູກ
ຫລານມະນຸດທັງປວງນຳອີກ.

51 ແລະ ພຣະວິນຍານໄດ້ກ່າວກັບຂ້າ
ພະເຈົ້າອີກ, ແທ້ຈິງແລ້ວ, ໄດ້ຮ້ອງຂໍຂ້າພະ
ເຈົ້າດ້ວຍສຽງອັນມີລິດເດດ, ມີຄວາມວ່າ:
ຈົ່ງອອກໄປ ແລະ ກ່າວກັບຜູ້ຄົນພວກນີ້—
ຈົ່ງກັບໃຈ, ເພາະຖ້າຫາກພວກທ່ານບໍ່ກັບ
ໃຈ ພວກທ່ານກໍບໍ່ມີທາງທີ່ຈະໄດ້ຮັບອານາ
ຈັກ [ກ]ສະຫວັນມາເປັນມູນມໍລະດົກໄດ້.

52 ແລະ ອີກຢ່າງໜຶ່ງ ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ພຣະວິນຍານໄດ້ກ່າວ
ໄວ້ວ່າ: ຈົ່ງເບິ່ງ, [ກ]ຂວານລໍຢູ່ທີ່ຮາກຕົ້ນ
ໄມ້; ສະນັ້ນ ຕົ້ນໃດທີ່ບໍ່ເປັນໝາກດີຈະຖືກ
[ຂ]ໂຄ່ນລົງ ແລະ ໂຍນເຂົ້າກອງໄຟ, ແທ້ຈິງ
ແລ້ວ, ເປັນໄຟທີ່ຈະມອດບໍ່ໄດ້, ເຖິງແມ່ນ
ເປັນໄຟທີ່ບໍ່ຮູ້ມອດ. ຈົ່ງເບິ່ງ, ແລະ ຈົ່ງຈຳ
ໄວ້ວ່າ ພຣະຜູ້ບໍລິສຸດໄດ້ຮັບສັ່ງເລື່ອງນີ້.

53 ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຂ້າພະເຈົ້າກ່າວກັບພວກທ່ານ
ວ່າ, ພວກທ່ານຈະຕໍ່ຕ້ານຂໍ້ຄວາມນີ້ໄດ້ບໍ;
ແທ້ຈິງແລ້ວ, ພວກທ່ານຈະປະຖິ້ມເລື່ອງ
ເຫລົ່ານີ້ໄດ້ບໍ, ແລະ [ກ]ຢຽບຢ່ຳພຣະຜູ້ບໍລິ
ສຸດໄວ້ໃຕ້ຕີນຂອງພວກທ່ານໄດ້ບໍ; ແທ້ຈິງ
ແລ້ວ, ພວກທ່ານຈະອວດອົ່ງໃນ [ຂ]ຄວາມ
ທະນົງໃຈຂອງພວກທ່ານໄດ້ບໍ; ແທ້ຈິງ
ແລ້ວ, ທ່ານຍັງຈະຂືນນຸ່ງເສື້ອຜ້າ [ຄ]ລາຄາ
ແພງ ແລະ ໝົກໝຸ້ນຢູ່ກັບສິ່ງທີ່ບໍ່ມີປະ
ໂຫຍດຂອງໂລກ, ກັບ [ງ]ຂອງມີຄ່າຂອງ
ພວກທ່ານຢູ່ບໍ?

54 ແທ້ຈິງແລ້ວ, ພວກທ່ານຈະຝືນຄິດ
ຢູ່ບໍວ່າ ພວກທ່ານເປັນຄົນດີກວ່າຄົນອື່ນ;
ແທ້ຈິງແລ້ວ, ພວກທ່ານຈະຝືນຂົ່ມເຫັງພີ່
ນ້ອງຂອງພວກທ່ານຜູ້ທີ່ຖ່ອມຕົວ ແລະ
ເດີນໄປຕາມລະບຽບອັນສັກສິດຂອງພຣະ
ເຈົ້າ, ຊຶ່ງໂດຍຖານະນີ້ພວກເຂົາໄດ້ຖືກນຳ
ມາສູ່ສາດສະໜາຈັກ, ໂດຍໄດ້ຮັບ [ກ]ການ
ຊຳລະໃຫ້ບໍລິສຸດໂດຍພຣະວິນຍານສັກ
ສິດ, ແລະ ພວກເຂົາໄດ້ນຳວຽກງານຊຶ່ງສົມ
ຄວນກັບການກັບໃຈອອກມາ—

55 ແທ້ຈິງແລ້ວ, ແລະ ພວກທ່ານຈະຂືນ
ຫັນຫລັງໃຫ້ [ກ]ຄົນຍາກຈົນ ແລະ ຄົນຂັດ
ສົນ, ແລະ ກີດກັນເຂົ້າຂອງ ຂອງພວກທ່ານ
ຈາກພວກເຂົາຢູ່ບໍ?

56 ແລະ ສຸດທ້າຍ, ທຸກຄົນທີ່ຈະຂືນຢູ່ໃນ
ຄວາມຊົ່ວຮ້າຍ, ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ຄົນເຫລົ່ານີ້ຄືຄົນທີ່ຈະຖືກໂຄ່ນລົງ
ແລະ ໂຍນເຂົ້າກອງໄຟ ຖ້າຫາກພວກເຂົາ
ບໍ່ກັບໃຈຢ່າງໄວ.

57 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ທຸກຄົນທີ່ປາດຖະໜາຈະຕິດຕາມ
ສຽງຂອງ [ກ]ຜູ້ລ້ຽງທີ່ດີ, ຈົ່ງອອກມາຈາກຄົນ
ຊົ່ວເຖິດ, ແລະ ຈົ່ງ [ຂ]ແຍກຍ້າຍກັນຢູ່, ແລະ

50 *ຂ* ພສສ 24; ມທ 2:2;
ລກ 23:2;
2 ນຟ 10:14;
ຄພ 38:21–22;
128:22–23; ມຊ 7:53.
ຄມພ ພຣະເຢຊູຄຣິດ;
ອານາຈັກຂອງພຣະເຈົ້າ
ຫລື ອານາຈັກສະຫວັນ.
51 *ກ* ຄມພ ສະຫວັນ.
52 *ກ* ລກ 3:9;
ຄພ 97:7.
*ຂ* ຢຄ 5:46; 6:7;
3 ນຟ 27:11–12.
53 *ກ* 1 ນຟ 19:7.
*ຂ* ຄມພ ຈອງຫອງ,
ຄວາມຈອງຫອງ.
*ຄ* 2 ນຟ 28:11–14;
ມມ 8:36–39.
*ງ* ພສສ 62:10;
ຄພ 56:16–18.
54 *ກ* ຄມພ ຊຳລະໃຫ້ບໍລິສຸດ,
ການຊຳລະໃຫ້ບໍລິສຸດ.
55 *ກ* ພສສ 109:15–16;
ຢຄ 2:17;
ຣລມ 6:39–40.
57 *ກ* ຄມພ ຜູ້ລ້ຽງທີ່ດີ.
*ຂ* ອຊຣ 6:21; 9:1;
ນມຢ 9:2;
2 ທສນ 3:6;
ຄພ 133:5, 14.

ຈົ່ງຢ່າແຕະຕ້ອງສິ່ງທີ່ບໍ່ສະອາດຂອງພວກ
ເຂົາ; ແລະ ຈົ່ງເບິ່ງຊື່ຂອງພວກເຂົາຈະຖືກ
[ຄ]ລຶບ ໄປ, ເພື່ອ ວ່າຊື່ຂອງຄົນ ຊົ່ວຈະບໍ່ຖືກ
ນັບເຂົ້າຢູ່ໃນບັນດາຊື່ຂອງຄົນຊອບທຳ,
ເພື່ອພຣະຄຳຂອງພຣະເຈົ້າຈະສຳເລັດ ຊຶ່ງ
ກ່າວໄວ້ວ່າ: ຊື່ຂອງຄົນຊົ່ວຈະບໍ່ປະປົນຢູ່
ກັບຊື່ຂອງຜູ້ຄົນຂອງເຮົາ;

58 ເພາະວ່າເຮົາຈະຂຽນຊື່ຂອງຄົນຊອບ
ທຳໄວ້ໃນ [ກ]ທະບຽນແຫ່ງຊີວິດ, ແລະ ເຮົາ
ຈະມອບມູນມໍລະດົກໃຫ້ແກ່ພວກເຂົາທາງ
ຂວາມືຂອງເຮົາ. ແລະ ບັດນີ້, ພີ່ນ້ອງຂອງ
ຂ້າພະເຈົ້າ, ພວກທ່ານມີອັນໃດແດ່ທີ່ຈະ
ກ່າວຄັດຄ້ານໃນເລື່ອງນີ້? ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ, ຖ້າຫາກພວກທ່ານເວົ້າ
ຄັດຄ້ານ, ມັນກໍບໍ່ເປັນປະໂຫຍດຫຍັງ,
ເພາະພຣະຄຳຂອງພຣະເຈົ້າຕ້ອງສຳເລັດ
ຢ່າງແນ່ນອນ.

59 ເພາະມີຜູ້ລ້ຽງຄົນໃດແດ່ໃນບັນດາ
ພວກທ່ານທີ່ມີແກະຫລາຍໂຕ ແຕ່ບໍ່ຄອຍ
ເຝົ້າມັນ, ເພື່ອໝາປ່າຈະບໍ່ເຂົ້າມາກິນຝູງ
ແກະຂອງລາວ? ແລະ ຈົ່ງເບິ່ງ, ຖ້າຫາກ
ໝາປ່າເຂົ້າມາຫາຝູງແກະຂອງລາວ, ລາວ
ຈະບໍ່ໄລ່ມັນອອກໄປບໍ? ແທ້ຈິງແລ້ວ, ແລະ
ໃນທີ່ສຸດ, ຖ້າຫາກລາວເຮັດໄດ້, ລາວກໍຈະ
ທຳລາຍມັນເສຍ.

60 ແລະ ບັດນີ້ ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ຜູ້ລ້ຽງທີ່ດີໄດ້ເອີ້ນຫາພວກທ່ານ
ຢູ່; ແລະ ຖ້າຫາກພວກທ່ານຈະເຊື່ອຟັງສຸ
ລະສຽງຂອງພຣະອົງ, ພຣະອົງຈະນຳພວກ
ທ່ານເຂົ້າຝູງຂອງພຣະອົງ, ແລະ ພວກ
ທ່ານຈະເປັນແກະຂອງພຣະອົງ; ແລະ
ພຣະອົງຈະກ່າວກັບພວກທ່ານວ່າ ໝາປ່າ
ທີ່ຫິວໂຫຍຈະບໍ່ສາມາດເຂົ້າມາທຳຮ້າຍ
ພວກທ່ານໄດ້ເລີຍ, ເພື່ອພວກທ່ານຈະບໍ່
ຖືກທຳລາຍ.

61 ແລະ ບັດນີ້ຂ້າພະເຈົ້າແອວມາຂໍສັ່ງ
ພວກທ່ານດ້ວຍພາສາຂອງ [ກ]ພຣະອົງຜູ້ໄດ້
ບັນຊາຂ້າພະເຈົ້າ, ໃຫ້ພວກທ່ານຍຶດຖືປະ
ຕິບັດຕາມຄຳທີ່ຂ້າພະເຈົ້າໄດ້ເວົ້າກັບພວກ
ທ່ານ.

62 ຂ້າພະເຈົ້າເວົ້າເປັນຄຳສັ່ງກັບພວກ
ທ່ານຜູ້ເປັນຂອງສາດສະໜາຈັກ; ແລະ ກັບ
ຜູ້ທີ່ບໍ່ໄດ້ເປັນຂອງສາດສະໜາຈັກ ຂ້າພະ
ເຈົ້າເວົ້າເປັນການເຊື້ອເຊີນ, ມີຄວາມວ່າ:
ຈົ່ງມາ ແລະ ຮັບບັບຕິສະມາໄວ້ກັບການ
ກັບໃຈ, ເພື່ອພວກທ່ານຈະໄດ້ເປັນຜູ້ຮັບ
ສ່ວນໝາກໄມ້ຈາກ [ກ]ຕົ້ນໄມ້ແຫ່ງຊີວິດ.

## ບົດທີ 6

*ສາດສະໜາຈັກໃນເຊຣາເຮັມລາໄດ້ຖືກ ຊຳລະໃຫ້ສະອາດ ແລະ ເຮັດໃຫ້ເປັນ ລະບຽບຮຽບຮ້ອຍ—ແອວມາໄປຫາເມືອງ ກີເດໂອນເພື່ອສັ່ງສອນ. ປະມານ 83 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງ ຈາກແອວມາໄດ້ເວົ້າກັບຜູ້ຄົນ
ຂອງສາດສະໜາຈັກ ຊຶ່ງຖືກສະຖາປະນາ
ຂຶ້ນໃນເມືອງເຊຣາເຮັມລາແລ້ວ, ເພິ່ນໄດ້
[ກ]ແຕ່ງຕັ້ງໃຫ້ມີປະໂລຫິດ ແລະ [ຂ]ແອວເດີ
ໂດຍວາງ [ຄ]ມືຂອງເພິ່ນ ໃສ່ຕາມລະບຽບ
ຂອງພຣະເຈົ້າ ເພື່ອໃຫ້ເປັນປະທານ ແລະ
[ງ]ດູແລສາດສະໜາຈັກ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດ

57 *ຄ* ພບຍ 29:20; ມຣນ 6:7; ຄພ 20:8.
58 *ກ* ຄມພ ໜັງສືທະບຽນແຫ່ງຊີວິດ.
61 *ກ* ແອວ 5:44.
62 *ກ* 1 ນຟ 8:10; 11:21–23.
**6** 1 *ກ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* ຄມພ ແອວເດີ.
*ຄ* ຄມພ ມື, ການວາງ.
*ງ* ຄພ 52:39.

ກໍຕາມທີ່ບໍ່ໄດ້ເປັນຂອງສາດສະໜາຈັກແຕ່
ກັບໃຈຈາກບາບຂອງຕົນ ແລ້ວ [ກ]ຮັບບັບຕິ
ສະມາໄວ້ກັບການກັບໃຈ, ຜູ້ນັ້ນກໍຖືກຮັບ
ເຂົ້າຢູ່ໃນສາດສະໜາຈັກ.
3 ແລະ ເຫດການ ໄດ້ບັງເກີດຂຶ້ນຄື ຜູ້
ໃດກໍຕາມທີ່ເປັນຂອງສາດສະໜາຈັກທີ່
ບໍ່ [ກ]ກັບໃຈຈາກຄວາມຊົ່ວຮ້າຍຂອງຕົນ
ແລະ ຖ່ອມຕົວຕໍ່ພຣະພັກຂອງພຣະເຈົ້າ
ຂ້າພະເຈົ້າໝາຍເຖິງຜູ້ທີ່ລະເມີເພີ້ຝັນດ້ວຍ
[ຂ]ຄວາມທະນົງໃຈ ຄົນເຫລົ່ານັ້ນຍ່ອມຖືກ
ປະຕິເສດ, ແລະ ຊື່ຂອງພວກເຂົາຖືກ [ຄ]ລຶບ
ອອກ ແລະ ຊື່ຂອງພວກເຂົາບໍ່ໄດ້ຖືກນັບ
ເຂົ້າຢູ່ໃນບັນດາຊື່ຂອງຄົນທີ່ຊອບທຳ.
4 ແລະ ພວກເຂົາເລີ່ມສະຖາປະນາ
ລະບຽບຂອງສາດສະໜາຈັກຂຶ້ນແນວນີ້ໃນ
ເມືອງເຊຣາເຮັມລາ.
5 ບັດນີ້ຂ້າພະເຈົ້າຢາກໃຫ້ພວກທ່ານ
ເຂົ້າໃຈວ່າ ພຣະຄຳຂອງພຣະເຈົ້າເພື່ອແຜ່
ແກ່ຄົນທັງປວງເພື່ອຈະບໍ່ໃຫ້ມີຜູ້ໃດຖືກຕັດ
ສິດທີ່ຈະມາຊຸມນຸມກັນເພື່ອຟັງພຣະຄຳ
ຂອງພຣະເຈົ້າ.
6 ເຖິງຢ່າງໃດກໍຕາມ ລູກໆຂອງພຣະ
ເຈົ້າຍັງໄດ້ຮັບບັນຊາວ່າ ພວກເຂົາຄວນມາ
ເຕົ້າໂຮມກັນເລື້ອຍໆ ແລະ ຮ່ວມກັນ [ກ]ຖື
ສິນອົດເຂົ້າ ແລະ ອະທິຖານຢ່າງສຸດກຳລັງ
ເພື່ອຄວາມຜາສຸກຂອງຈິດວິນຍານຂອງຜູ້
ທີ່ບໍ່ຮູ້ຈັກພຣະເຈົ້າ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ແອວມາໄດ້ວາງຂໍ້ບັງຄັບແລ້ວ ເພິ່ນກໍໄດ້
ອຳລາພວກເຂົາໄປ, ແທ້ຈິງແລ້ວ, ເພິ່ນໄດ້
ຈາກສາດສະໜາຈັກທີ່ຢູ່ໃນເມືອງເຊຣາ
ເຮັມລາໄປ, ແລະ ຂ້າມໄປທາງຕາເວັນ
ອອກຂອງແມ່ນ້ຳຊີໂດນ, ເຂົ້າໄປໃນ [ກ]ຮ່ອມ
ພູກີເດໂອນທີ່ມີເມືອງສ້າງໄວ້, ຊຶ່ງມີຊື່ວ່າ
ເມືອງກີເດໂອນ, ຊຶ່ງຕັ້ງຢູ່ໃນຮ່ອມພູທີ່ມີຊື່
ວ່າ ກີເດໂອນ, ຕາມຊື່ຂອງກີເດໂອນຜູ້ທີ່
ຖືກ [ຂ]ຂ້າຕາຍດ້ວຍດາບຂອງນີຮໍ.
8 ແລະ ແອວມາໄດ້ໄປ ແລະ ເລີ່ມປະ
ກາດພຣະຄຳຂອງພຣະເຈົ້າໃຫ້ສາດສະ
ໜາຈັກ ຊຶ່ງໄດ້ສະຖາປະນາຂຶ້ນໃນຮ່ອມ
ພູກີເດໂອນ, ອັນເປັນໄປຕາມການເປີດ
ເຜີຍຂອງຄວາມຈິງໃນຄຳເວົ້າທີ່ບັນພະບຸ
ລຸດຂອງເພິ່ນໄດ້ເວົ້າໄວ້ ແລະ ຕາມພຣະ
ວິນຍານແຫ່ງການທຳນາຍຊຶ່ງມີຢູ່ກັບເພິ່ນ
ຕາມ [ກ]ປະຈັກພະຍານເຖິງພຣະເຢຊູຄຣິດ
ພຣະບຸດຂອງພຣະເຈົ້າຜູ້ຈະສະເດັດມາ
ໄຖ່ຜູ້ຄົນຂອງພຣະອົງຈາກບາບຂອງພວກ
ເຂົາ, ແລະ ຕາມຖານະອັນສັກສິດນີ້ ຊຶ່ງ
ໂດຍຖານະນີ້ທີ່ເພິ່ນຖືກເອີ້ນ. ແລະ ມີຂຽນ
ໄວ້ດັ່ງນັ້ນ. ອາແມນ.

---

ຄຳເວົ້າຂອງແອວມາ ຊຶ່ງເພິ່ນໄດ້ກ່າວກັບຜູ້ຄົນໃນເມືອງກີເດໂອນຕາມບັນທຶກຂອງເພິ່ນເອງ.

*ມີບັນທຶກໄວ້ໃນບົດທີ 7.*

## ບົດທີ 7

*ພຣະຄຣິດຈະກຳເນີດຈາກນາງມາຣີ—ພຣະອົງຈະແກ້ສາຍຮັດແຫ່ງຄວາມຕາຍ*

2 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
3 *ກ* ມຊຢ 26:6.
*ຂ* ຄມພ ຈອງຫອງ, ຄວາມຈອງຫອງ.
*ຄ* ອພຍ 32:33; ມຊຢ 26:36; ແອວ 1:24; 5:57–58. ຄມພ ການຖືກໄລ່ອອກ.
6 *ກ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
7 *ກ* ແອວ 2:20.
*ຂ* ແອວ 1:9.
8 *ກ* ພນມ 19:10.

*ແລະ ຮັບ ເອົາ ບາບ ແທນ ຜູ້ ຄົນ ຂອງ ພຣະ ອົງ—ຜູ້ທີ່ກັບ ໃຈ, ຮັບບັບຕິ ສະມາ, ແລະ ຮັກ ສາ ພ ຣະ ບັນ ຍັດ ຈ ະ ມີ ຊີ ວິດ ນິ ລັນ ດອນ—ຄວາມ ສົກ ກະ ປົກບໍ່ ສາມາດຮັບ ເອົາອານາຈັກຂອງພຣະ ເຈົ້າມາ ເປັນມູນ ມໍລະດົກ ໄດ້—ຄວາມຖ່ອມຕົວ, ສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນເປັນສິ່ງຈຳ ເປັນ. ປະມານ 83 ປີ ກ່ອນ ຄ.ສ.*

1 ຈົ່ງ ເບິ່ງ ພີ່ນ້ອງທີ່ຮັກ ແພງ ຂອງ ຂ້າ ພະເຈົ້າ, ເວລານີ້ຂ້າພະ ເຈົ້າໄດ້ຮັບອະນຸ ຍາດໃຫ້ມາຫາພວກທ່ານ, ສະນັ້ນ ຂ້າພະ ເຈົ້າຈຶ່ງພະຍາຍາມທີ່ຈະ [ກ]ເວົ້າກັບພວກ ທ່ານ ໃນພາສາຂອງຂ້າພະ ເຈົ້າເອງ; ແທ້ ຈິງແລ້ວ, ໂດຍປາກຂອງຂ້າພະ ເຈົ້າເອງ, ເວລານີ້ເປັນເທື່ອທຳອິດທີ່ຂ້າພະເຈົ້າໄດ້ ເວົ້າກັບພວກທ່ານດ້ວຍຕົວເອງ, ຂ້າພະ ເຈົ້າເອງໄດ້ຖືກກັກຕົວໄວ້ກັບ [ຂ]ບັນລັງຕັດ ສິນ, ໂດຍມີທຸລະກິດອັນຈຳເປັນຊຶ່ງເຮັດໃຫ້ ຂ້າພະເຈົ້າມາຫາພວກທ່ານບໍ່ໄດ້.

2 ແລະ ແມ່ນແຕ່ຕອນນີ້ຂ້າພະເຈົ້າກໍ ຄົງມາຫາພວກທ່ານບໍ່ໄດ້ ຖ້າຫາກຂ້າພະ ເຈົ້າບໍ່ໄດ້ [ກ]ມອບບັນລັງຕັດສິນໄວ້ກັບຜູ້ອື່ນ ເພື່ອປົກຄອງແທນ; ແລະ ດ້ວຍພຣະເມດ ຕາອັນຫລວງຫລາຍ ພຣະຜູ້ເປັນເຈົ້າຈຶ່ງ ອະນຸຍາດໃຫ້ຂ້າພະເຈົ້າມາຫາພວກທ່ານ.

3 ແລະ ຈົ່ງເບິ່ງ, ຂ້າພະ ເຈົ້າມາໂດຍມີ ຄວາມຫວັງອັນໃຫຍ່ຫລວງ ແລະ ມີຄວາມ ປາດຖະໜາຫລາຍທີ່ສຸດວ່າ ຂ້າພະເຈົ້າຈະ ເຫັນພວກທ່ານຖ່ອມຕົວຕໍ່ພຣະພັກຂອງ ພຣະເຈົ້າ, ແລະ ວ່າພວກທ່ານໄດ້ທູນຂໍ ພຣະຄຸນຂອງພຣະອົງຢູ່ສະເໝີ, ວ່າຂ້າພະ ເຈົ້າຈະເຫັນພວກທ່ານບໍ່ມີຂໍ້ຕຳນິຕໍ່ພຣະ ພັກຂອງພຣະອົງ, ວ່າຂ້າພະເຈົ້າຈະເຫັນ ພວກທ່ານບໍ່ໄດ້ຕົກຢູ່ໃນສະຖານະການ ອັນເປັນຕາຢ້ານດັ່ງທີ່ພີ່ນ້ອງຂອງພວກເຮົາ ເປັນຢູ່ໃນເຊຣາເຮັມລາ.

4 ຂໍພຣະນາມຂອງພຣະເຈົ້າຈົ່ງພຣະກະ ເສີມສຳລານເຖີດ, ທີ່ພຣະອົງໄດ້ປະທານ ໃຫ້ຂ້າພະ ເຈົ້າຮູ້ຈັກ, ແທ້ຈິງ ແລ້ວ, ໄດ້ ປະທານຄວາມຊື່ນຊົມຢ່າງລົ້ນເຫລືອໃຫ້ ແກ່ຂ້າພະ ເຈົ້າທີ່ຮູ້ຈັກວ່າ ພວກເຂົາໄດ້ ສະຖາປະນາຂຶ້ນຢູ່ໃນທາງແຫ່ງຄວາມ ຊອບທຳຂອງພຣະອົງອີກ.

5 ແລະ ຂ້າພະເຈົ້າວາງໃຈຕາມພຣະວິນ ຍານຂອງພຣະເຈົ້າຊຶ່ງຢູ່ກັບຂ້າພະເຈົ້າ, ວ່າຂ້າພະເຈົ້າຈະມີຄວາມຊື່ນຊົມໃນພວກ ທ່ານນຳອີກ; ເຖິງຢ່າງໃດກໍຕາມ ຂ້າພະ ເຈົ້າບໍ່ປາດຖະໜາວ່າ ຄວາມຊື່ນຊົມຂອງ ຂ້າພະເຈົ້າໃນພວກທ່ານຈະເກີດຂຶ້ນໂດຍ ສາເຫດຈາກຄວາມທຸກ ແລະ ຄວາມເສົ້າ ສະຫລົດໃຈທີ່ສຸດ ຊຶ່ງຂ້າພະເຈົ້າເຄີຍມີ ກັບພີ່ນ້ອງທີ່ເຊຣາເຮັມລາ, ເພາະຈົ່ງເບິ່ງ, ຄວາມຊື່ນຊົມຂອງຂ້າພະເຈົ້າເກີດກັບ ພວກເຂົາຫລັງຈາກທີ່ຂ້າພະເຈົ້າໄດ້ທ່ອງ ທ່ຽວໄປດ້ວຍຄວາມທຸກ ແລະ ເສົ້າສະຫລົດ ໃຈມາຫລາຍແລ້ວ.

6 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າວາງໃຈວ່າ ພວກທ່ານບໍ່ຢູ່ໃນສະພາບບໍ່ເຊື່ອຖືດັ່ງທີ່ພີ່ ນ້ອງຂອງພວກທ່ານໄດ້ເປັນມາແລ້ວ; ຂ້າ ພະເຈົ້າວາງໃຈວ່າ ພວກທ່ານບໍ່ລະເມີເພີ້ ຝັນດ້ວຍຄວາມທະນົງໃຈ; ແທ້ຈິງແລ້ວ, ຂ້າ ພະເຈົ້າວາງໃຈວ່າ ພວກທ່ານບໍ່ໄດ້ໝົກໝຸ້ນ ຢູ່ກັບຂອງມີຄ່າ ແລະ ສິ່ງທີ່ບໍ່ມີປະໂຫຍດ ຂອງໂລກ; ແທ້ຈິງແລ້ວ, ຂ້າພະເຈົ້າວາງໃຈ ວ່າ ພວກທ່ານບໍ່ໄດ້ກາບໄຫວ້ [ກ]ຮູບບູຊາ,

**7** 1 *ກ* ແອວ 4:19.
*ຂ* ມຊຢ 29:42.
2 *ກ* ແອວ 4:16–18.
6 *ກ* 2 ນຟ 9:37;
ຣລມ 6:31.

ແຕ່ພວກທ່ານໄດ້ກາບໄຫວ້ [ຂ]ພຣະເຈົ້າອົງ
ທ່ຽງແທ້ ແລະ ຊົງພຣະຊົນຢູ່, ແລະ ວ່າພວກ
ທ່ານ ມຸ້ງຫາການປົດບາບຂອງພວກທ່ານ
ດ້ວຍສັດທາອັນເປັນນິດ, ຊຶ່ງຈະມາເຖິງ.
7 ເພາະຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບ
ພວກທ່ານວ່າ ມີຫລາຍສິ່ງຫລາຍຢ່າງທີ່ຈະ
ມາເຖິງ; ແລະ ຈົ່ງເບິ່ງ, ມີຢ່າງໜຶ່ງທີ່ສຳຄັນ
ກວ່າໝູ່ໝົດ—ເພາະຈົ່ງເບິ່ງ, [ກ]ເວລາຢູ່ບໍ່ໄກ
ທີ່ພຣະຜູ້ໄຖ່ຈະມີຊີວິດ ແລະ ຈະສະເດັດ
ມາໃນບັນດາຜູ້ຄົນຂອງພຣະອົງ.
8 ຈົ່ງເບິ່ງ, ຂ້າພະເຈົ້າບໍ່ໄດ້ກ່າວວ່າ ພຣະ
ອົງຈະສະເດັດມາໃນບັນດາພວກເຮົາໃນ
ເວລາທີ່ພຣະອົງຢູ່ໃນຮ່າງກາຍທີ່ເປັນ
ມະຕະຂອງພຣະອົງ; ເພາະຈົ່ງເບິ່ງ, ພຣະ
ວິນຍານບໍ່ໄດ້ບອກຂ້າພະເຈົ້າວ່າ ເລື່ອງ
ລາວຈະເປັນໄປແນວນີ້. ບັດນີ້ສຳລັບເລື່ອງ
ນີ້ຂ້າພະເຈົ້າບໍ່ຮູ້ຈັກ, ແຕ່ເທົ່າທີ່ຂ້າພະເຈົ້າ
ຮູ້ຄື ອົງພຣະຜູ້ເປັນເຈົ້າມີອຳນາດທີ່ຈະກະ
ທຳທຸກສິ່ງທຸກຢ່າງຊຶ່ງເປັນໄປຕາມພຣະຄຳ
ຂອງພຣະອົງ.
9 ແຕ່ຈົ່ງເບິ່ງ, ພຣະວິນຍານໄດ້ກ່າວກັບ
ຂ້າພະເຈົ້າພຽງເທົ່ານີ້, ມີຄວາມວ່າ: ຈົ່ງ
ຮ້ອງບອກຜູ້ຄົນພວກນີ້ວ່າ—ເຈົ້າຈົ່ງ [ກ]ກັບ
ໃຈເຖີດ, ແລະ ຕຽມທາງຂອງພຣະຜູ້ເປັນ
ເຈົ້າ, ແລະ ເດີນໃນທາງຂອງພຣະອົງທີ່ຊື່
ຕົງ; ເພາະຈົ່ງເບິ່ງ, ອານາຈັກສະຫວັນໃກ້
ເຂົ້າມາເຖິງແລ້ວ, ແລະ ພຣະບຸດຂອງພຣະ
ເຈົ້າຈະສະເດັດ [ຂ]ມາຍັງພື້ນແຜ່ນດິນໂລກ.
10 ແລະ ຈົ່ງເບິ່ງ, ພຣະອົງຈະ [ກ]ກຳເນີດ
ຈາກ [ຂ]ນາງມາຣີທີ່ເຢຣູຊາເລັມ ຊຶ່ງເປັນ
[ຄ]ແຜ່ນດິນຂອງບັນພະບຸລຸດຂອງພວກເຮົາ,
ນາງເປັນ [ງ]ຍິງບໍລິສຸດ, ເປັນພາຊະນະທີ່ປະ
ເສີດ ແລະ ຖືກເລືອກໄວ້ແລ້ວ, ຜູ້ທີ່ຈະ [ຈ]ຕັ້ງ
ທ້ອງໂດຍອຳນາດຂອງພຣະວິນຍານບໍລິ
ສຸດ, ແລະ ໃຫ້ກຳເນີດລູກຊາຍຜູ້ໜຶ່ງ, ແທ້
ຈິງແລ້ວ, ແມ່ນແຕ່ພຣະບຸດຂອງພຣະເຈົ້າ.
11 ແລະ ພຣະອົງຈະສະເດັດອອກໄປ,
ທົນຕໍ່ຄວາມເຈັບປວດ ແລະ [ກ]ຄວາມທຸກ
ແລະ ການລໍ້ລວງທຸກຢ່າງ; ແລະ ນີ້ກໍເພື່ອ
ຄຳເວົ້າຈະໄດ້ສຳເລັດຊຶ່ງໄດ້ກ່າວໄວ້ວ່າ
ພຣະອົງຈະຮັບເອົາຄວາມເຈັບປວດ ແລະ
ຄວາມປ່ວຍໄຂ້ຂອງຜູ້ຄົນຂອງພຣະອົງ.
12 ແລະ ພຣະອົງຈະຮັບເອົາ [ກ]ຄວາມ
ຕາຍ ເພື່ອພຣະອົງຈະໄດ້ເຮັດໃຫ້ສາຍ
ຮັດແຫ່ງຄວາມຕາຍຊຶ່ງຜູກມັດຜູ້ຄົນຂອງ
ພຣະອົງຫລຸດອອກ; ແລະ ພຣະອົງຈະຮັບ
ເອົາຄວາມບົກພ່ອງຂອງພວກເຂົາ ເພື່ອອຸ
ທອນຂອງພຣະອົງຈະເຕັມໄປດ້ວຍຄວາມ
ເມດຕາຕາມທາງຂອງເນື້ອໜັງ ເພື່ອພຣະ
ອົງຈະຮູ້ຈັກຕາມທາງຂອງເນື້ອໜັງວ່າ
ຈະ [ຂ]ຊ່ວຍເຫລືອຜູ້ຄົນຂອງພຣະອົງຕາມ
ຄວາມບົກພ່ອງຂອງພວກເຂົາໄດ້ແນວໃດ.
13 ບັດນີ້ພຣະວິນຍານ [ກ]ຮູ້ຈັກທຸກສິ່ງ;
ເຖິງຢ່າງໃດກໍຕາມ ພຣະບຸດຂອງພຣະເຈົ້າ
ຍັງຮັບທຸກທໍລະມານຕາມທາງຂອງເນື້ອ
ໜັງ ເພື່ອພຣະອົງຈະໄດ້ [ຂ]ຮັບເອົາບາບ

6 ຂ ດນອ 6:26.
7 ກ ແອວ 9:26.
9 ກ ມທ 3:2–4; ແອວ 9:25.
ຂ ມຊຢ 3:5; 7:27; 15:1–2.
10 ກ ອຊຢ 7:14; ລກ 1:27.
ຂ ມຊຢ 3:8. ຄມພ ມາຣີ, ມານດາຂອງພຣະເຢຊູ.
ຄ 1 ຂຄ 9:3; 2 ຂຄ 15:9; 1 ນຟ 1:4; 3 ນຟ 20:29.
ງ 1 ນຟ 11:13–21.
ຈ ມທ 1:20; ມຊຢ 15:3.
11 ກ ອຊຢ 53:3–5; ມຊຢ 14:3–5.
12 ກ 2 ນຟ 2:8; ແອວ 12:24–25. ຄມພ ຄືງ, ການຄືງ.
ຂ ຮຣ 2:18; 4:15; ຄພ 62:1.
13 ກ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
ຂ ມຊຢ 15:12. ຄມພ ຊົດໃຊ້, ການຊົດໃຊ້.

ຂອງຜູ້ຄົນຂອງພຣະອົງ, ເພື່ອພຣະອົງຈະ
ໄດ້ລຶບການລ່ວງ ລະເມີດຂອງພວກເຂົາ
ຕາມອຳນາດແຫ່ງການປົດປ່ອຍຂອງພຣະ
ອົງ; ແລະ ບັດນີ້ຈົ່ງເບິ່ງ, ນີ້ຄືປະຈັກພະຍານ
ທີ່ມີຢູ່ໃນຂ້າພະເຈົ້າ.
14 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ພວກທ່ານຕ້ອງກັບໃຈ, ແລະ
[ກ]ເກີດໃໝ່; ເພາະວ່າພຣະວິນຍານໄດ້ກ່າວ
ໄວ້ວ່າ ຖ້າຫາກພວກທ່ານບໍ່ເກີດໃໝ່ ພວກ
ທ່ານຈະບໍ່ໄດ້ຮັບອານາຈັກສະຫວັນມາ
ເປັນມູນມໍລະດົກ; ສະນັ້ນ ຈົ່ງມາເຖີດ ມາ
ຮັບບັບຕິສະມາໄວ້ກັບການກັບໃຈ, ເພື່ອ
ພວກທ່ານຈະຖືກລ້າງຈາກບາບຂອງພວກ
ທ່ານ, ເພື່ອພວກທ່ານຈະມີສັດທາໃນພຣະ
ເມສານ້ອຍຂອງພຣະເຈົ້າຜູ້ເອົາບາບຂອງ
ໂລກໄປ, ຜູ້ຊຶ່ງລິດອຳນາດຍິ່ງໃຫຍ່ຈະ
ຊ່ວຍໃຫ້ລອດ ແລະ ຈະຊຳລະລ້າງຈາກ
ຄວາມບໍ່ຊອບທຳທັງໝົດ.
15 ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບ
ພວກທ່ານວ່າ, ຈົ່ງມາເຖີດ, ຢ່າສູ່ຢ້ານ, ຈົ່ງ
ປະຖິ້ມບາບທຸກຢ່າງທີ່ [ກ]ກີດກັນພວກທ່ານ
ໄວ້ຢ່າງງ່າຍດາຍ, ຊຶ່ງບາບນັ້ນຜູກມັດພວກ
ທ່ານລົງໄປສູ່ຄວາມພິນາດ, ແທ້ຈິງແລ້ວ,
ຈົ່ງມາເຖີດ, ແລະ ອອກໄປສະແດງຕໍ່ພຣະ
ເຈົ້າຂອງພວກທ່ານວ່າ ພວກທ່ານເຕັມ
ໃຈທີ່ຈະກັບໃຈຈາກບາບຂອງພວກທ່ານ,
ແລະ ເຂົ້າເຮັດພັນທະສັນຍາກັບພຣະອົງທີ່
ຈະຮັກສາພຣະບັນຍັດຂອງພຣະອົງ, ແລະ
ເປັນພະຍານເຖິງສິ່ງນັ້ນຕໍ່ພຣະອົງໃນມື້ນີ້
ໂດຍການລົງໄປໃນນ້ຳແຫ່ງບັບຕິສະມາ.
16 ແລະ ຜູ້ໃດກໍຕາມທີ່ເຮັດຕາມນີ້, ແລະ
ຮັກສາພຣະບັນຍັດຂອງພຣະເຈົ້ານັບແຕ່
ເວລານີ້ເປັນຕົ້ນໄປ, ຜູ້ນັ້ນຈະຈື່ຈຳສິ່ງທີ່
ຂ້າພະເຈົ້າເວົ້າກັບເຂົາ, ແທ້ຈິງແລ້ວ, ເຂົາ
ຈະຈື່ຈຳສິ່ງທີ່ຂ້າພະເຈົ້າໄດ້ເວົ້າກັບເຂົາ,
ເຂົາຈະມີຊີວິດນິລັນດອນອີງຕາມປະຈັກ
ພະຍານຂອງພຣະວິນຍານສັກສິດ ຊຶ່ງເປັນ
ພະຍານໃນຂ້າພະເຈົ້າ.
17 ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ພວກທ່ານເຊື່ອໃນເລື່ອງເຫລົ່ານີ້
ບໍ່? ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານ
ວ່າ, ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າພວກ
ທ່ານເຊື່ອສິ່ງເຫລົ່ານີ້ ແລະ ເຫດຜົນທີ່ຂ້າ
ພະເຈົ້າຮູ້ ວ່າພວກທ່ານເຊື່ອເພາະໂດຍ
ການສະແດງໃຫ້ປະຈັກຂອງພຣະວິນຍານ
ຊຶ່ງຢູ່ໃນຂ້າພະເຈົ້າ. ແລະ ບັດນີ້ເພາະວ່າ
ສັດທາຂອງພວກທ່ານເຂັ້ມແຂງກ່ຽວກັບ
ເລື່ອງນີ້, ແທ້ຈິງແລ້ວ, ກ່ຽວກັບເລື່ອງທີ່ຂ້າ
ພະເຈົ້າໄດ້ເວົ້າມາ, ຂ້າພະເຈົ້າຈຶ່ງມີຄວາມ
ສຸກຢ່າງລົ້ນເຫລືອ.
18 ດັ່ງທີ່ຂ້າພະເຈົ້າໄດ້ເວົ້າກັບພວກ
ທ່ານມາແລ້ວຕັ້ງແຕ່ຕົ້ນ, ວ່າຂ້າພະເຈົ້າ
ປາດຖະໜາຫລາຍທີ່ສຸດທີ່ຈະບໍ່ໃຫ້ພວກ
ທ່ານຕົກຢູ່ໃນສະຖານະການທີ່ໜ້າຢ້ານ
ກົວດັ່ງທີ່ພີ່ນ້ອງຂອງພວກທ່ານເປັນຢູ່, ເຖິງ
ແມ່ນດັ່ງນີ້ ຂ້າພະເຈົ້າກໍເຫັນວ່າສົມຄວາມ
ປາດຖະໜາຂອງຂ້າພະເຈົ້າແລ້ວ.
19 ເພາະວ່າຂ້າພະເຈົ້າເຫັນວ່າພວກ
ທ່ານຢູ່ໃນທາງອັນຊອບທຳ; ຂ້າພະເຈົ້າ
ເຫັນວ່າພວກທ່ານຢູ່ໃນທາງຊຶ່ງຈະນຳໄປສູ່
ອານາຈັກຂອງພຣະເຈົ້າ; ແທ້ຈິງແລ້ວ, ຂ້າ
ພະເຈົ້າເຫັນວ່າພວກທ່ານກຳລັງເຮັດໃຫ້
[ກ]ທາງຂອງພຣະອົງຊື່ຕົງ.
20 ຂ້າພະເຈົ້າເຫັນວ່າມັນຖືກເຮັດໃຫ້
ເປັນທີ່ຮູ້ຈັກແກ່ພວກທ່ານແລ້ວ, ໂດຍ
ປະຈັກພະຍານແຫ່ງພຣະຄຳຂອງພຣະ

14 *ກ* ຄນພ ເກີດໃໝ່, ເກີດ ຈາກພຣະເຈົ້າ.
15 *ກ* 2 ນຟ 4:18.
19 *ກ* ມທ 3:3.

ອົງ, ວ່າພຣະອົງ [ກ]ດຳເນີນໄປຕາມທາງຄົດ
ບໍ່ໄດ້; ທັງບໍ່ປ່ຽນແປງຈາກສິ່ງທີ່ພຣະອົງໄດ້
ກ່າວໄວ້; ທັງບໍ່ມີເງົາຂອງການຫັນເຫຈາກ
ຂວາຫາຊ້າຍ, ຫລື ຈາກສິ່ງທີ່ຖືກຕ້ອງໄປ
ຫາສິ່ງທີ່ບໍ່ຖືກຕ້ອງ; ສະນັ້ນ, ເສັ້ນທາງເດີນ
ຂອງພຣະອົງຈຶ່ງເປັນຮອບໜຶ່ງທີ່ເປັນນິລັນ
ດອນ.
21 ແລະ ພຣະ ອົງ ຈະ ບໍ່ ສະ ຖິດ ຢູ່ ໃນ
ວິຫານທີ່ [ກ]ບໍ່ສັກສິດ; ທັງບໍ່ຮັບເອົາຄວາມ
ສົກກະປົກ ຫລື ວ່າຫຍັງກໍຕາມທີ່ບໍ່ສະອາດ
ເຂົ້າໄປໃນອານາຈັກຂອງພຣະເຈົ້າເລີຍ;
ສະນັ້ນຂ້າພະເຈົ້າກ່າວກັບພວກທ່ານວ່າ
ເວລາຈະມາເຖິງ, ແທ້ຈິງແລ້ວ, ມັນຈະເປັນ
ໃນວັນສຸດທ້າຍທີ່ຄົນ [ຂ]ສົກກະປົກຈະຄົງຢູ່
ໃນຄວາມສົກກະປົກຂອງເຂົາຕໍ່ໄປ.
22 ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າໄດ້ເວົ້າເລື່ອງເຫລົ່າ
ນີ້ກັບພວກທ່ານເພື່ອຂ້າພະເຈົ້າຈະໄດ້
ປຸກພວກທ່ານໃຫ້ຮູ້ສຶກເຖິງໜ້າທີ່ຂອງ
ພວກທ່ານຕໍ່ພຣະເຈົ້າ, ເພື່ອພວກທ່ານຈະ
ເດີນໄປໂດຍບໍ່ມີຂໍ້ຕຳນິຕໍ່ພຣະພັກຂອງ
ພຣະອົງ, ເພື່ອພວກທ່ານຈະເດີນໄປຕາມ
ລະບຽບອັນສັກສິດຂອງພຣະເຈົ້າຕາມທີ່
ພວກທ່ານຮັບເອົາໄວ້.
23 ແລະ ບັດນີ້ຂ້າພະເຈົ້າຢາກໃຫ້ພວກ
ທ່ານ [ກ]ຖ່ອມຕົວ, ເປັນຄົນສອນງ່າຍ, ແລະ
ອ່ອນໂຍນ; ເຮັດຕາມຄຳຂໍຮ້ອງ; ເຕັມໄປ
ດ້ວຍຄວາມອົດທົນ ແລະ ຄວາມອົດກັ້ນ;
ຮູ້ຈັກຫ້າມຕົນເອງໃນທຸກສິ່ງທຸກຢ່າງ; ພາກ
ພຽນໃນການຮັກສາພຣະບັນຍັດຂອງພຣະ
ເຈົ້າຕະຫລອດເວລາ; ທູນຂໍສິ່ງໃດກໍຕາມທີ່
ພວກທ່ານຕ້ອງການທັງທາງວິນຍານ ແລະ
ທາງໂລກ; ຈົ່ງຖວາຍຄຳຂອບພຣະຄຸນແດ່
ພຣະເຈົ້າສະເໝີໃນສິ່ງໃດກໍຕາມທີ່ພວກ
ທ່ານໄດ້ຮັບ.
24 ແລະ ໃຫ້ ເບິ່ງ ວ່າ ພວກ ທ່ານ ມີ
[ກ]ສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ,
ແລະ ເມື່ອນັ້ນພວກທ່ານຈະມີວຽກງານດີ
ຫລວງຫລາຍສະເໝີໄປ.
25 ແລະ ຂໍໃຫ້ພຣະຜູ້ເປັນເຈົ້າໂປດ
ປະທານພອນແກ່ພວກທ່ານ, ແລະ ຮັກ
ສາອາພອນຂອງພວກທ່ານໃຫ້ປາດສະ
ຈາກມົນທິນ, ເພື່ອໃນທີ່ສຸດພວກທ່ານຈະ
ໄດ້ຖືກນຳໄປນັ່ງຮ່ວມກັບອັບຣາຮາມ, ອີ
ຊາກ, ແລະ ຢາໂຄບ, ແລະ ສາດສະດາຜູ້
ບໍລິສຸດຜູ້ເຄີຍເປັນຢູ່ນັບແຕ່ການເລີ່ມຕົ້ນ
ຂອງໂລກ, ໂດຍໃຫ້ອາພອນຂອງພວກ
ທ່ານປາດສະຈາກມົນທິນຄືກັບອາພອນ
ຂອງພວກເພິ່ນທີ່ [ກ]ປາດສະຈາກມົນທິນ,
ຢູ່ໃນອານາຈັກສະຫວັນ ຊຶ່ງຈະບໍ່ອອກໄປ
ອີກ.
26 ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າໄດ້ເວົ້າຂໍ້ຄວາມເຫລົ່າ
ນີ້ກັບພວກທ່ານຕາມພຣະວິນຍານຊຶ່ງໃຫ້
ຖ້ອຍຄຳໃນຂ້າພະເຈົ້າ; ແລະ ຈິດວິນຍານ
ຂອງຂ້າພະເຈົ້າມີຄວາມປິຕິຍິນດີຢ່າງຍິ່ງ
ເພາະຄວາມພາກພຽນ ແລະ ຄວາມເອົາໃຈ
ໃສ່ຢ່າງຍິ່ງຂອງພວກທ່ານຕໍ່ຄຳເວົ້າຂອງ
ຂ້າພະເຈົ້າ.
27 ແລະ ບັດນີ້, ຂໍໃຫ້ [ກ]ສັນຕິສຸກຂອງ
ພຣະເຈົ້າຈົ່ງສະຖິດຢູ່ກັບພວກທ່ານດ້ວຍ
ເທີ້ນ, ແລະ ຢູ່ກັບເຮືອນຊານຂອງພວກ

20 *ກ* 1 ນຟ 10:19; ແອວ 37:12; ຄພ 3:2.
21 *ກ* 1 ກຣທ 3:16–17; 6:19; ມຊຢ 2:37; ແອວ 34:36.
*ຂ* 1 ນຟ 15:33–35; 2 ນຟ 9:16; ມມ 9:14; ຄພ 88:35.
23 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
24 *ກ* 1 ກຣທ 13; ອທ 12:30–35; ມຣນ 7:33–48.
25 *ກ* 2 ປຕ 3:14.
27 *ກ* ຄມພ ສະຫງົບ, ຄວາມສະຫງົບ.

ທ່ານ ແລະ ຢູ່ກັບແຜ່ນດິນຂອງພວກທ່ານ,
ແລະ ຢູ່ກັບຝູງສັດລ້ຽງ ແລະ ຝູງສັດໃຊ້ແຮງ
ງານຂອງພວກທ່ານ, ແລະ ທຸກສິ່ງທຸກຢ່າງ
ທີ່ພວກທ່ານເປັນເຈົ້າຂອງ, ທັງແມ່ຍິງຂອງ
ພວກທ່ານ ແລະ ລູກໆຂອງພວກທ່ານອີງ
ຕາມສັດທາ ແລະ ວຽກງານດີຂອງພວກ
ທ່ານ, ນັບແຕ່ເວລານີ້ເປັນຕົ້ນໄປ ແລະ
ຕະຫລອດການ. ແລະ ຂ້າພະເຈົ້າຂໍເວົ້າໄວ້
ດັ່ງນີ້. ອາແມນ.

## ບົດທີ 8

*ແອວມາສັ່ງສອນ ແລະ ໃຫ້ບັບຕິສະມາຢູ່ໃນເມືອງມີເລັກ—ເພິ່ນຖືກປະຕິເສດຢູ່ໃນເມືອງອຳໂມນໄນຮາ ແລະ ໄດ້ໜີໄປ—ທູດອົງໜຶ່ງສັ່ງໃຫ້ເພິ່ນກັບຄືນໄປ ແລະ ປ່າວຮ້ອງເລື່ອງການກັບໃຈຕໍ່ຜູ້ຄົນ—ເພິ່ນໄດ້ຮັບຕ້ອນໂດຍແອມມິວເລັກ, ແລະ ທັງສອງໄດ້ສັ່ງສອນຢູ່ໃນເມືອງອຳໂມນໄນຮາ. ປະມານ 82 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ແອວມາກັບມາຈາກ [ກ]ແຜ່ນດິນກີເດໂອນ
ຫລັງຈາກສິດສອນຜູ້ຄົນຂອງກີເດໂອນ
ຫລາຍເລື່ອງ ຊຶ່ງບໍ່ສາມາດຂຽນໄວ້ໄດ້, ໄດ້
ສະຖາປະນາລະບຽບຂອງສາດສະໜາຈັກ
ຄືກັນກັບທີ່ເພິ່ນໄດ້ເຮັດມາກ່ອນແລ້ວໃນ
ແຜ່ນດິນເຊຣາເຮັມລາ, ແທ້ຈິງແລ້ວ, ເພິ່ນ
ກັບຄືນມາບ້ານຂອງເພິ່ນທີ່ເຊຣາເຮັມລາ
ເພື່ອພັກຜ່ອນຈາກວຽກງານທີ່ເພິ່ນໄດ້ເຮັດ
ໄປນັ້ນ.
2 ແລະ ປີທີເກົ້າແຫ່ງການປົກຄອງຂອງ
ຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດ
ລົງດັ່ງນີ້.
3 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນ
ຕົ້ນປີທີສິບແຫ່ງການປົກຄອງຂອງຜູ້ຕັດສິນ
ດູແລຜູ້ຄົນຂອງນີໄຟ, ຄືແອວມາໄດ້ອອກ
ຈາກເມືອງນັ້ນ ແລະ ໄດ້ອອກເດີນທາງ
ຂ້າມໄປຫາແຜ່ນດິນມີເລັກທາງຕາເວັນຕົກ
ຂອງ [ກ]ແມ່ນ້ຳຊີໂດນທາງຕາເວັນຕົກໃກ້ກັບ
ຊາຍແດນຂອງຖິ່ນແຫ້ງແລ້ງກັນດານ.
4 ແລະ ເພິ່ນໄດ້ເລີ່ມສິດສອນໃນແຜ່ນ
ດິນມີເລັກຕາມ [ກ]ລະບຽບອັນສັກສິດຂອງ
ພຣະເຈົ້າ, ຊຶ່ງໂດຍຖານະນັ້ນເພິ່ນຖືກເອີ້ນ;
ແລະ ເພິ່ນເລີ່ມສິດສອນຜູ້ຄົນທົ່ວແຜ່ນດິນ
ມີເລັກ.
5 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຜູ້ຄົນໄດ້ມາຫາເພິ່ນຈາກທຸກບ່ອນຂອງ
ແຜ່ນດິນ ຊຶ່ງຢູ່ໃກ້ກັບຖິ່ນແຫ້ງແລ້ງກັນ
ດານ. ແລະ ພວກເຂົາໄດ້ຮັບບັບຕິສະມາ
ກັນທົ່ວແຜ່ນດິນນັ້ນ;
6 ສະນັ້ນຫລັງຈາກເພິ່ນສິ້ນສຸດວຽກງານ
ຂອງເພິ່ນທີ່ມີເລັກ ເພິ່ນໄດ້ອອກຈາກບ່ອນ
ນັ້ນ, ແລະ ໄດ້ເດີນທາງສາມມື້ໄປທາງເໜືອ
ຂອງແຜ່ນດິນມີເລັກ; ແລະ ເພິ່ນໄດ້ມາ
ຮອດເມືອງໜຶ່ງຊຶ່ງມີຊື່ວ່າ ອຳໂມນໄນຮາ.
7 ບັດນີ້ມັນເປັນທຳນຽມຂອງຜູ້ຄົນຂອງ
ນີໄຟທີ່ຈະເອີ້ນຊື່ແຜ່ນດິນ ຫລື ເມືອງຂອງ
ພວກເຂົາ ແລະ ໝູ່ບ້ານຂອງພວກເຂົາ,
ແທ້ຈິງແລ້ວ, ແມ່ນແຕ່ໝູ່ບ້ານເລັກນ້ອຍ
ທັງໝົດຂອງພວກເຂົາຕາມຊື່ຂອງຜູ້ທີ່ເປັນ
ເຈົ້າຂອງທຳອິດ; ແລະ ຈຶ່ງເປັນເຊັ່ນດຽວ
ກັນນີ້ກັບແຜ່ນດິນອຳໂມນໄນຮາ.
8 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເວລາທີ່ແອວມາມາຮອດເມືອງອຳໂມນໄນ
ຮາ ເພິ່ນກໍໄດ້ເລີ່ມສັ່ງສອນພຣະຄຳຂອງ
ພຣະເຈົ້າໃຫ້ແກ່ຜູ້ຄົນເຫລົ່ານັ້ນ.

---

**8** 1*ກ* ແອວ 2:20; 6:7.
3*ກ* ແອວ 16:6–7.
4*ກ* ຄພ 107:2–4.
ຄມພ ຖານະປະໂລຫິດ
ແຫ່ງເມນຄິເສເດັກ.

9 ບັດນີ້ຊາຕານ [ກ]ມີອຳນາດຫລາຍທີ່ສຸດ
ເໜືອໃຈຂອງຜູ້ຄົນໃນເມືອງອຳໂມນໄນຮາ
ນັ້ນ; ສະນັ້ນ ພວກເຂົາຈຶ່ງບໍ່ຍອມເຊື່ອຟັງ
ຄຳເວົ້າຂອງແອວມາເລີຍ.
10 ເຖິງຢ່າງໃດກໍຕາມແອວມາກໍ [ກ]ເຮັດ
ວຽກຢ່າງໜັກໃນທາງວິນຍານໂດຍ [ຂ]ຕໍ່ສູ້
ກັບພຣະເຈົ້າດ້ວຍ [ຄ]ການອະທິຖານຢ່າງ
ສຸດກຳລັງເພື່ອຂໍໃຫ້ພຣະອົງຖອກເທພຣະ
ວິນຍານຂອງພຣະອົງລົງມາເທິງຜູ້ຄົນຊຶ່ງ
ຢູ່ໃນເມືອງນັ້ນ ເພື່ອພຣະອົງຈະອະນຸຍາດ
ໃຫ້ເພິ່ນບັບຕິສະມາພວກເຂົາເຫລົ່ານັ້ນ
ດ້ວຍການກັບໃຈ.
11 ເຖິງຢ່າງໃດກໍຕາມ, ພວກເຂົາຍັງ
ເຮັດໃຈແຂງກະດ້າງໂດຍເວົ້າກັບເພິ່ນວ່າ:
ຈົ່ງເບິ່ງ, ພວກເຮົາຮູ້ຈັກວ່າທ່ານຄືແອວມາ
ແລະ ພວກເຮົາຮູ້ວ່າ ທ່ານເປັນມະຫາປະ
ໂລຫິດດູແລສາດສະໜາຈັກ ຊຶ່ງທ່ານໄດ້
ສະຖາປະນາຂຶ້ນຫລາຍບ່ອນໃນແຜ່ນດິນ
ຕາມປະເພນີຂອງທ່ານ, ແລະ ພວກເຮົາບໍ່
ໄດ້ຢູ່ໃນສາດສະໜາຈັກຂອງທ່ານ, ແລະ
ພວກເຮົາບໍ່ເຊື່ອຕາມຮີດຄອງປະເພນີອັນ
ໂງ່ຈ້າເຊັ່ນນັ້ນ.
12 ແລະ ບັດນີ້ພວກເຮົາຮູ້ວ່າ ຍ້ອນວ່າ
ພວກເຮົາບໍ່ໄດ້ຢູ່ໃນສາດສະໜາຈັກຂອງ
ທ່ານ ແລະ ພວກເຮົາຮູ້ວ່າ ທ່ານບໍ່ມີອຳນາດ
ເໜືອພວກເຮົາ; ແລະ ທ່ານໄດ້ມອບບັນລັງ
ຕັດສິນໃຫ້ [ກ]ນີໄຟຮາແລ້ວ; ສະນັ້ນ ທ່ານບໍ່
ໄດ້ເປັນຫົວໜ້າຜູ້ຕັດສິນດູແລພວກເຮົາອີກ
ຕໍ່ໄປ.
13 ບັດນີ້ເມື່ອຜູ້ຄົນເວົ້າແນວນັ້ນແລ້ວ,
ແລະ ໄດ້ຕໍ່ຕ້ານຄຳເວົ້າທັງໝົດຂອງເພິ່ນ
ແລະ ໝິ່ນປະໝາດ ແລະ ຖົ່ມນ້ຳລາຍໃສ່
ເພິ່ນ, ແລະ ຂັບໄລ່ເພິ່ນອອກໄປຈາກເມືອງ
ຂອງພວກເຂົາ, ເພິ່ນຈຶ່ງໄດ້ອອກໄປຈາກ
ບ່ອນນັ້ນ ແລະ ອອກເດີນທາງມຸ້ງໜ້າໄປ
ຫາອີກເມືອງໜຶ່ງຊຶ່ງມີຊື່ວ່າ ອາໂຣນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຂະນະທີ່ເພິ່ນກຳລັງໄປຫາເມືອງນັ້ນ, ໂດຍ
ທີ່ຖືກຖ່ວງດຶງດ້ວຍຄວາມເສົ້າສະຫລົດ
ໃຈ, ໂດຍທີ່ບຸກມາດ້ວຍ [ກ]ຄວາມທຸກຍາກ
ລຳບາກຫລາຍ ແລະ ດ້ວຍຄວາມເຈັບ
ປວດໃນຈິດວິນຍານ, ຍ້ອນຄວາມຊົ່ວຮ້າຍ
ຂອງຜູ້ຄົນຢູ່ໃນເມືອງອຳໂມນໄນຮາ, ເຫດ
ການໄດ້ບັງເກີດຂຶ້ນເວລາທີ່ແອວມາເຕັມ
ໄປດ້ວຍຄວາມເສົ້າສະຫລົດໃຈຢູ່ນັ້ນ, ຈົ່ງ
ເບິ່ງ, [ຂ]ທູດອົງໜຶ່ງຂອງພຣະຜູ້ເປັນເຈົ້າໄດ້
ມາປະກົດຕໍ່ເພິ່ນ, ກ່າວວ່າ:
15 ເຈົ້າເປັນສຸກແລ້ວແອວມາ; ສະນັ້ນ,
ຈົ່ງເງີຍໜ້າຂຶ້ນ ແລະ ປິຕິຍິນດີເຖີດ, ຍ້ອນ
ວ່າເຈົ້າມີເຫດຜົນອັນຍິ່ງໃຫຍ່ທີ່ສຸດທີ່ຈະປິ
ຕິຍິນດີ; ເພາະວ່າເຈົ້າຊື່ສັດໃນການຮັກສາ
ພຣະບັນຍັດຂອງພຣະເຈົ້ານັບແຕ່ເວລາ
ທີ່ເຈົ້າໄດ້ຮັບຂ່າວຄັ້ງທຳອິດຂອງເຈົ້າຈາກ
ພຣະອົງ. ຈົ່ງເບິ່ງ, ເຮົາຄືຜູ້ທີ່ [ກ]ນຳມັນມາໃຫ້
ເຈົ້າ.
16 ແລະ ຈົ່ງເບິ່ງ, ເຮົາຖືກສົ່ງລົງມາເພື່ອ
ສັ່ງໃຫ້ເຈົ້າກັບຄືນໄປຫາເມືອງອຳໂມນໄນ
ຮາ ແລະ ສັ່ງສອນຜູ້ຄົນຂອງເມືອງນັ້ນອີກ;
ແທ້ຈິງແລ້ວ, ຈົ່ງສັ່ງສອນພວກເຂົາ. ແທ້
ຈິງແລ້ວ, ຈົ່ງເວົ້າກັບພວກເຂົາວ່າ ຖ້າຫາກ
ພວກເຂົາບໍ່ກັບໃຈ ແລ້ວອົງພຣະຜູ້ເປັນເຈົ້າ
ຈະ [ກ]ທຳລາຍພວກເຂົາ.

9 *ກ* 2 ນຟ 28:19–22; ຄພ 10:20.
10 *ກ* ແອວ 17:5.
*ຂ* ອນ 1:1–12.
*ຄ* 3 ນຟ 27:1. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
12 *ກ* ແອວ 4:20.
14 *ກ* ຄມພ ຍາກລຳບາກ, ຄວາມຍາກລຳບາກ.
*ຂ* ແອວ 10:7–10, 20. ຄມພ ທູດ, ເທວະດາ.
15 *ກ* ມຊຢ 27:11–16.
16 *ກ* ແອວ 9:12, 18, 24.

17 ຈົ່ງ ເບິ່ງ, ໃນ ຂະນະ ນີ້ ພວກ ເຂົາ ພະ
ຍາຍາມທີ່ຈະທຳລາຍເສລີພາບຂອງຜູ້ຄົນ
ຂອງ ເຈົ້າ, (ເພາະ ວ່າ ພຣະຜູ້ ເປັນ ເຈົ້າ ໄດ້
ກ່າວ ດັ່ງນີ້) ຊຶ່ງ ກົງກັນຂ້າມກັບ ຂໍ້ກຳນົດ,
ແລະ ການພິພາກສາ, ແລະ ພຣະບັນຍັດ
ຊຶ່ງພຣະອົງໄດ້ປະທານ ໃຫ້ແກ່ຜູ້ຄົນຂອງ
ພຣະອົງ.

18 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກແອວມາໄດ້ຮັບຂ່າວ ຈາກທູດ
ຂອງພຣະຜູ້ເປັນເຈົ້າແລ້ວ, ເພິ່ນຈຶ່ງໄດ້ກັບ
ຄືນໄປຫາແຜ່ນດິນອຳໂມນໄນຮາຢ່າງວ່ອງ
ໄວ. ແລະ ເພິ່ນໄດ້ເຂົ້າໄປໃນເມືອງອີກທາງ
ໜຶ່ງ, ແທ້ຈິງ ແລ້ວ, ເຂົ້າ ໄປ ທາງ ໃຕ້ ຂອງ
ເມືອງອຳໂມນໄນຮາ.

19 ແລະ ໃນຂະນະທີ່ເພິ່ນກຳລັງເຂົ້າໄປ
ໃນເມືອງນັ້ນດ້ວຍຄວາມຫິວໂຫຍ, ເພິ່ນໄດ້
ເວົ້າກັບຊາຍຄົນໜຶ່ງວ່າ: ເຈົ້າຫາອັນໃດໃຫ້
ຜູ້ຮັບໃຊ້ທີ່ຖ່ອມຕົວຂອງພຣະເຈົ້າກິນແດ່
ໄດ້ບໍ?

20 ແລະ ຊາຍຄົນນັ້ນກ່າວກັບ ເພິ່ນວ່າ:
ຂ້ານ້ອຍເປັນຊາວນີໄຟ, ແລະ ຂ້ານ້ອຍຮູ້
ຈັກວ່າທ່ານເປັນສາດສະດາຜູ້ບໍລິສຸດຂອງ
ພຣະເຈົ້າ ເພາະ ວ່າ ທ່ານ ແມ່ນ ຜູ້ ທີ່ [ກ]ທູດ
ກ່າວ ໃນ ພາບນິມິດວ່າ: ເຈົ້າ ຈົ່ງຕ້ອນຮັບ.
ສະນັ້ນ, ຈົ່ງເຂົ້າໄປໃນເຮືອນກັບຂ້ານ້ອຍ
ແລະ ຂ້ານ້ອຍຈະໃຫ້ອາຫານຂອງຂ້ານ້ອຍ
ແກ່ທ່ານ; ແລະ ຂ້ານ້ອຍ ຮູ້ຈັກ ແລ້ວ ວ່າ
ທ່ານຈະເປັນພອນໃຫ້ແກ່ຂ້ານ້ອຍ ແລະ
ເຮືອນຊານຂອງຂ້ານ້ອຍ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາຍຄົນນັ້ນໄດ້ຕ້ອນຮັບເພິ່ນເຂົ້າໄປໃນ
ເຮືອນຂອງລາວ; ແລະ ຊາຍຄົນນັ້ນຊື່ວ່າ
[ກ]ແອມມິວເລັກ; ແລະ ລາວໄດ້ນຳເອົາເຂົ້າ
ແລະ ຊີ້ນອອກມາວາງຕໍ່ໜ້າແອວມາ.

22 ແລະ ເຫດການ ໄດ້ ບັງເກີດຂຶ້ນຄື
ແອວມາໄດ້ກິນເຂົ້າຈົນອີ່ມ; ແລ້ວເພິ່ນໄດ້
[ກ]ໃຫ້ພອນ ແກ່ ແອມມິວເລັກ ພ້ອມດ້ວຍ
ເຮືອນຊານຂອງລາວ, ແລະ ເພິ່ນໄດ້ຖວາຍ
ຄວາມຂອບຄຸນແດ່ພຣະເຈົ້າ.

23 ແລະ ຫລັງ ຈາກ ເພິ່ນ ໄດ້ ກິນ ອີ່ມ
ແລ້ວ ເພິ່ນ ໄດ້ ເວົ້າ ກັບ ແອມມິວເລັກວ່າ:
ເຮົາຄືແອວມາ ແລະ ເປັນ [ກ]ມະຫາປະໂລ
ຫິດດູແລສາດສະໜາຈັກຂອງພຣະເຈົ້າ
ຕະຫລອດທົ່ວແຜ່ນດິນ.

24 ແລະ ຈົ່ງເບິ່ງ, ເຮົາ ຖືກ ເອີ້ນ ໃຫ້ ມາ
ສັ່ງສອນພຣະຄຳຂອງພຣະເຈົ້າໃນບັນດາ
ຜູ້ຄົນພວກນີ້ທັງໝົດ, ຕາມວິນຍານ ແຫ່ງ
ການເປີດເຜີຍ ແລະ ການທຳນາຍ; ແລະ
ເຮົາຢູ່ໃນແຜ່ນດິນນີ້ແລ້ວ ແຕ່ຜູ້ຄົນບໍ່ຕ້ອນ
ຮັບເຮົາເລີຍ ແລະ ພວກເຂົາໄດ້ [ກ]ຂັບໄລ່
ເຮົາອອກໄປ ແລະ ເຮົາເອງເກືອບຈະຫັນ
ຫລັງໃສ່ແຜ່ນດິນນີ້ຕະຫລອດໄປ.

25 ແລະ ຈົ່ງເບິ່ງ, ເຮົາໄດ້ຖືກສັ່ງໃຫ້ກັບ
ຄືນມາອີກ ແລະ ທຳນາຍແກ່ຜູ້ຄົນພວກນີ້,
ແທ້ຈິງແລ້ວ, ມາໃຫ້ຖ້ອຍຄຳພ້ອງພວກເຂົາ
ກ່ຽວກັບຄວາມຊົ່ວຮ້າຍຂອງພວກເຂົາ.

26 ແລະ ບັດນີ້, ແອມມິວເລັກ, ຍ້ອນວ່າ
ເຈົ້າໄດ້ລ້ຽງເກືອເຮົາ, ແລະ ໃຫ້ເຮົາເຂົ້າມາ
ພັກເຊົານຳເຈົ້າ; ເຈົ້າຈຶ່ງໄດ້ຮັບພອນແລ້ວ,
ເຮົາອຶດຫິວຍ້ອນວ່າເຮົາໄດ້ຖືສິນອົດເຂົ້າ
ມາເປັນເວລາຫລາຍມື້ແລ້ວ.

27 ແລະ ແອວມາໄດ້ພັກເຊົາຢູ່ນຳແອມ
ມິວເລັກຫລາຍມື້ກ່ອນເພິ່ນເລີ່ມສັ່ງສອນຜູ້
ຄົນຕໍ່ໄປ.

28 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື ຜູ້
ຄົນ ໄດ້ ເຮັດ ຄວາມຊົ່ວຮ້າຍ ຢ່າງຮຸນແຮງ
ຫລາຍຂຶ້ນ.

29 ແລະ ພຣະຄຳມາເຖິງແອວມາ, ກ່າວ

20 ກ ແອວ 10:7–9.
21 ກ ຄນພ ແອມມິວເລັກ.
22 ກ ແອວ 10:11.
23 ກ ແອວ 5:3, 44, 49; 13:1–20.
24 ກ ແອວ 8:13.

ວ່າ: ຈົ່ງໄປ, ແລະ ເວົ້າກັບ ແອມມິວເລັກຜູ້ຮັບໃຊ້ຂອງເຮົາວ່າ ຈົ່ງອອກໄປທຳນາຍແກ່ຜູ້ຄົນພວກນີ້, ໂດຍກ່າວ ວ່າ—ພວກເຈົ້າຈົ່ງ [ກ]ກັບໃຈເຖີດ ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ຖ້າຫາກພວກເຈົ້າບໍ່ກັບໃຈ ແລ້ວເຮົາຈະມາຢ້ຽມຢາມຜູ້ຄົນພວກນີ້ດ້ວຍຄວາມຄຽດແຄ້ນຂອງເຮົາ; ແທ້ຈິງແລ້ວ, ແລະ ເຮົາຈະບໍ່ເອົາຄວາມຄຽດແຄ້ນຂອງເຮົາກັບຄືນໄປ.

30 ແລະ ແອວມາກັບ ແອມມິວເລັກໄດ້ອອກໄປໃນບັນດາຜູ້ຄົນ, ເພື່ອປະກາດພຣະຄຳຂອງພຣະເຈົ້າແກ່ພວກເຂົາ; ແລະທັງສອງກໍເຕັມໄປດ້ວຍພຣະວິນຍານບໍລິສຸດ.

31 ແລະ ພວກເພິ່ນໄດ້ຮັບ [ກ]ອຳນາດອັນມະຫາສານ, ເຖິງຂະໜາດທີ່ບໍ່ສາມາດຂັງພວກເພິ່ນໄວ້ໃນຄຸກມືດໄດ້; ທັງເປັນໄປບໍ່ໄດ້ທີ່ຜູ້ຄົນຈະຂ້າພວກເພິ່ນ; ເຖິງຢ່າງໃດກໍຕາມ, ພວກເພິ່ນກໍຍັງບໍ່ໄດ້ໃຊ້ [ຂ]ອຳນາດຂອງພວກເພິ່ນເລີຍ ຈົນວ່າພວກເພິ່ນຖືກມັດໄວ້ດ້ວຍເຊືອກ ແລະ ຖືກເອົາເຂົ້າຄຸກ. ບັດນີ້, ມັນເປັນໄປເພື່ອພຣະຜູ້ເປັນເຈົ້າຈະໄດ້ສະແດງອຳນາດຂອງພຣະອົງອອກມາທີ່ມີຢູ່ໃນພວກເພິ່ນ.

32 ແລະ ເຫດການໄດ້ບັງເກີດຂຶ້ນຄືພວກເພິ່ນໄດ້ອອກໄປ ແລະ ເລີ່ມສັ່ງສອນແລະ ທຳນາຍແກ່ຜູ້ຄົນຕາມວິນຍານ ແລະອຳນາດຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານໃຫ້ແກ່ພວກເພິ່ນ.

---

ຄຳເວົ້າຂອງແອວມາ, ແລະ ຄຳເວົ້າຂອງແອມມິວເລັກນຳອີກ, ຊຶ່ງໄດ້ປະກາດແກ່ຜູ້ຄົນທີ່ຢູ່ໃນແຜ່ນດິນອຳໂມນໄນຮາ. ແລະພວກເພິ່ນຖືກຈັບເຂົ້າຄຸກນຳອີກ, ແລະ ຖືກປົດປ່ອຍໂດຍອຳນາດອັນໜ້າອັດສະຈັນໃຈຂອງພຣະເຈົ້າຊຶ່ງຢູ່ກັບພວກເພິ່ນ, ຕາມບັນທຶກຂອງແອວມາ.

*ມີຢູ່ໃນບົດທີ 9 ຈົນເຖິງບົດທີ 14.*

## ບົດທີ 9

*ແອວມາສັ່ງໃຫ້ຜູ້ຄົນຂອງອຳໂມນໄນຮາກັບໃຈ—ພຣະຜູ້ເປັນເຈົ້າຈະເມດຕາຕໍ່ຊາວເລມັນໃນຍຸກສຸດທ້າຍ—ຖ້າຫາກຊາວນີໄຟປະຖິ້ມຄວາມສະຫວ່າງ, ແລ້ວພວກເຂົາຈະຖືກທຳລາຍໂດຍຊາວເລມັນ—ພຣະບຸດຂອງພຣະເຈົ້າຈະສະເດັດມາໃນບໍ່ດົນ—ພຣະອົງຈະໄຖ່ຜູ້ທີ່ກັບໃຈ, ຮັບບັບຕິສະມາ, ແລະ ມີສັດທາໃນພຣະນາມຂອງພຣະອົງ. ປະມານ 82 ປີ ກ່ອນ ຄ.ສ.*

1 ແລະ ອີກເທື່ອໜຶ່ງ, ຂ້າພະເຈົ້າແອວມາໂດຍທີ່ໄດ້ຮັບບັນຊາຈາກພຣະເຈົ້າວ່າ ຂ້າພະເຈົ້າຄວນພາແອມມິວເລັກອອກໄປສັ່ງສອນຜູ້ຄົນພວກນີ້ອີກ ຫລື ຜູ້ຄົນທີ່ຢູ່ໃນເມືອງອຳໂມນໄນຮາ, ເຫດການໄດ້ບັງເກີດຂຶ້ນ ເມື່ອຂ້າພະເຈົ້າເລີ່ມຕົ້ນສັ່ງສອນພວກເຂົາ, ພວກເຂົາກໍຂັດແຍ້ງກັບຂ້າພະເຈົ້າ, ໂດຍກ່າວວ່າ:

2 ທ່ານແມ່ນໃຜ? ທ່ານຄິດບໍວ່າພວກເຮົາຈະເຊື່ອປະຈັກພະຍານຂອງຄົນ [ກ]ຜູ້ດຽວ, ເຖິງແມ່ນວ່າທ່ານຈະສັ່ງສອນພວກເຮົາວ່າແຜ່ນດິນໂລກຈະຜ່ານໄປ?

3 ບັດນີ້ ຄົນພວກນີ້ບໍ່ເຂົ້າໃຈຄຳເວົ້າທີ່ພວກເຂົາເວົ້າໄປນັ້ນເລີຍ; ເພາະວ່າພວກເຂົາບໍ່ຮູ້ວ່າ ແຜ່ນດິນໂລກຈະຜ່ານໄປ.

4 ແລະ ພວກເຂົາເວົ້າອີກວ່າ: ພວກເຮົາ

---

29 *ກ* ແອວ 9:12, 18.
ຄມພ ກັບໃຈ, ການກັບໃຈ.

31 *ກ* 1 ນຟ 1:20.
*ຂ* ແອວ 14:17–29.

**9** 2 *ກ* ພບຍ 17:6.

ຈະບໍ່ເຊື່ອຄຳເວົ້າຂອງທ່ານເຖິງແມ່ນທ່ານ
ຈະທຳນາຍວ່າ ເມືອງໃຫຍ່ຈະຖືກທຳລາຍ
ໄປໃນມື້ [ກ]ດຽວ.
5 ບັດນີ້ພວກເຂົາບໍ່ຮູ້ວ່າ ພຣະເຈົ້າຈະກະ
ທຳສິ່ງອັດສະຈັນເຊັ່ນນີ້ໄດ້, ເພາະວ່າພວກ
ເຂົາເປັນຄົນທີ່ມີໃຈແຂງກະດ້າງ ແລະ
ແຂງຄໍ.
6 ແລະ ພວກເຂົາເວົ້າວ່າ: ພຣະເຈົ້າ
[ກ]ແມ່ນໃຜ, ເປັນຫຍັງເພິ່ນຈຶ່ງ [ຂ]ບໍ່ສົ່ງສິດ
ອຳນາດຂອງເພິ່ນມາໃນບັນດາຜູ້ຄົນ ພວກ
ນີ້, ຊຶ່ງມີຫລາຍກວ່າຄົນຜູ້ດຽວເພື່ອປະກາດ
ຄວາມຈິງຂອງສິ່ງທີ່ຍິ່ງໃຫຍ່ ແລະ ໜ້າອັດ
ສະຈັນເຊັ່ນນີ້ແກ່ພວກເຂົາ?
7 ແລະ ພວກເຂົາຢືນຂຶ້ນເພື່ອຫວັງທີ່ຈະ
ຈັບຂ້າພະເຈົ້າ; ແຕ່ຈົ່ງເບິ່ງ, ພວກເຂົາຈັບ
ບໍ່ໄດ້. ແລະ ຂ້າພະເຈົ້າໄດ້ຢືນຂຶ້ນຢ່າງອາດ
ຫານເພື່ອປະກາດແກ່ພວກເຂົາ, ແທ້ຈິງ
ແລ້ວ, ຂ້າພະເຈົ້າໄດ້ໃຫ້ຖ້ອຍຄຳຢ່າງກ້າ
ຫານແກ່ພວກເຂົາ, ໂດຍກ່າວວ່າ:
8 ຈົ່ງເບິ່ງ, ໂອ້ ພວກເຈົ້າ [ກ]ລຸ້ນທີ່ຊົ່ວ ແລະ
ເສຍຄົນເອີຍ, ພວກເຈົ້າລືມປະເພນີຂອງ
ບັນພະບຸລຸດຂອງພວກເຈົ້າໄດ້ແນວໃດ;
ແທ້ຈິງແລ້ວ, ເປັນຫຍັງພວກເຈົ້າຈຶ່ງລືມ
ພຣະບັນຍັດຂອງພຣະເຈົ້າ.
9 ພວກເຈົ້າຈື່ບໍ່ໄດ້ບໍວ່າ ລີໄຮບັນພະບຸ
ລຸດຂອງພວກເຮົາໄດ້ຖືກນຳພາອອກຈາກ
ເຢຣູຊາເລັມໂດຍ [ກ]ພຣະຫັດ ຂອງພຣະ
ເຈົ້າ? ພວກເຈົ້າຈື່ບໍ່ໄດ້ບໍວ່າ ຄົນພວກນັ້ນ
ຖືກນຳເອົາຜ່ານຖິ່ນແຫ້ງແລ້ງກັນດານມາ
ທັງໝົດໂດຍພຣະອົງ?
10 ພວກເຈົ້າຫລົງລືມກັນຢ່າງວ່ອງໄວ
ໄດ້ແນວໃດວ່າ ຕັ້ງຫລາຍເທື່ອທີ່ພຣະອົງ
ໄດ້ປົດປ່ອຍບັນພະບຸລຸດຂອງພວກເຮົາ
ໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ
ແລະ ປົກປັກຮັກສາພວກເຂົາໃຫ້ພົ້ນຈາກ
ການຖືກທຳລາຍ ຈາກກຳມືຂອງພີ່ນ້ອງ
ຂອງພວກເຂົາ?
11 ແທ້ຈິງແລ້ວ, ແລະ ຖ້າຫາກບໍ່ແມ່ນ
ຍ້ອນອຳນາດ ແລະ ຄວາມເມດຕາອັນ
ຫາທີ່ປຽບບໍ່ໄດ້ຂອງພຣະອົງ ແລະ ຄວາມ
ອົດກັ້ນຂອງພຣະອົງທີ່ມີຕໍ່ພວກເຮົາແລ້ວ,
ພວກເຮົາກໍຈະຖືກຕັດອອກຈາກພື້ນແຜ່ນ
ດິນໂລກຢ່າງຫລີກລ້ຽງບໍ່ໄດ້ແຕ່ດົນແລ້ວ
ກ່ອນເຖິງໄລຍະນີ້, ແລະ ອາດຖືກສົ່ງໄປ
ສູ່ສະພາບແຫ່ງຄວາມທຸກທໍລະມານ ແລະ
ຈິບຫາຍອັນ [ກ]ບໍ່ມີບ່ອນຈົບ.
12 ຈົ່ງເບິ່ງ, ບັດນີ້ຂ້າພະເຈົ້າກ່າວກັບ
ພວກເຈົ້າວ່າ ພຣະອົງໄດ້ບັນຊາໃຫ້ພວກ
ເຈົ້າກັບໃຈ; ແລະ ພວກເຈົ້າກໍຈະບໍ່ມີທາງ
ໃດທີ່ຈະໄດ້ຮັບອານາຈັກຂອງພຣະເຈົ້າມາ
ເປັນມູນມໍລະດົກເລີຍ ຖ້າຫາກພວກເຈົ້າບໍ່
ກັບໃຈ. ແຕ່ຈົ່ງເບິ່ງ, ນີ້ຍັງບໍ່ໝົດ—ພຣະອົງ
ໄດ້ບັນຊາໃຫ້ພວກເຈົ້າກັບໃຈ, ຖ້າບໍ່ດັ່ງນັ້ນ
ພຣະອົງຈະ [ກ]ທຳລາຍພວກເຈົ້າໃຫ້ໝົດໄປ
ຈາກພື້ນແຜ່ນດິນໂລກ; ແທ້ຈິງແລ້ວ, ພຣະ
ອົງຈະສະເດັດມາຢ້ຽມຢາມພວກເຈົ້າດ້ວຍ
ຄວາມຄຽດແຄ້ນຂອງພຣະອົງ, ແລະ ໃນ
ຄວາມຄຽດແຄ້ນ [ຂ]ທີ່ສຸດນັ້ນ ພຣະອົງຈະບໍ່
ຫັນໜີເລີຍ.
13 ຈົ່ງເບິ່ງ, ພວກເຈົ້າຈື່ຈຳພຣະຄຳທີ່
ພຣະອົງຮັບສັ່ງກັບລີໄຮໄດ້ບໍວ່າ: [ກ]ຕາບໃດ
ທີ່ເຈົ້າຈະຮັກສາບັນຍັດຂອງເຮົາ, ເຈົ້າຈະ
ຮຸ່ງເຮືອງຢູ່ໃນແຜ່ນດິນ? ແລະ ໄດ້ກ່າວໄວ້
ອີກວ່າ: ແລະ ຕາບໃດທີ່ເຈົ້າຈະບໍ່ຮັກສາ

4 ກ ແອວ 16:9–10.
6 ກ ອພຍ 5:2; ມຊຢ 11:27; ມຊ 5:16.
ຂ ແອວ 10:12.
8 ກ ແອວ 10:17–25.
9 ກ 1 ນຟ 2:1–7.
11 ກ ມຊຢ 16:11.
12 ກ ແອວ 8:16; 10:19, 23, 27.
ຂ ແອວ 8:29.
13 ກ 2 ນຟ 1:20; ມຊຢ 1:7; ແອວ 37:13.

ບັນຍັດຂອງເຮົາ ເຈົ້າຈະຖືກຕັດອອກຈາກ
ທີ່ປະທັບຂອງພຣະຜູ້ເປັນເຈົ້າ.
14 ບັດນີ້ຂ້າພະເຈົ້າຢາກໃຫ້ພວກເຈົ້າຈື່
ໄວ້ວ່າ ຕາບໃດທີ່ຊາວເລມັນບໍ່ໄດ້ຮັກສາ
ພຣະບັນຍັດຂອງພຣະເຈົ້າ, ພວກເຂົາຈຶ່ງ
ໄດ້ຖືກ [ກ]ຕັດອອກຈາກທີ່ປະທັບຂອງພຣະ
ຜູ້ເປັນເຈົ້າ. ບັດນີ້ ພວກເຮົາຈຶ່ງເຫັນວ່າ
ພຣະຄຳຂອງພຣະຜູ້ເປັນເຈົ້າເປັນຄວາມ
ຈິງແລ້ວໃນເລື່ອງນີ້, ແລະ ຊາວເລມັນໄດ້
ຖືກຕັດອອກຈາກທີ່ປະທັບຂອງພຣະອົງ,
ນັບຕັ້ງແຕ່ຕົ້ນຂອງການລ່ວງລະເມີດຄັ້ງທຳ
ອິດຂອງພວກເຂົາໃນແຜ່ນດິນນີ້.
15 ເຖິງຢ່າງໃດກໍຕາມ ຂ້າພະເຈົ້າຂໍເວົ້າ
ກັບພວກເຈົ້າວ່າ, ໃນວັນແຫ່ງການພິພາກ
ສາ ພຣະອົງຈະ [ກ]ທົນກັບພວກເຂົາໄດ້
ຫລາຍກວ່າທົນກັບພວກເຈົ້າ ຖ້າຫາກວ່າ
ພວກເຈົ້າຍັງຄົງຢູ່ໃນບາບຂອງພວກເຈົ້າ,
ແທ້ຈິງແລ້ວ, ແມ່ນໃນຊີວິດນີ້ ພຣະອົງຈະ
ທົນກັບພວກເຂົາໄດ້ຫລາຍກວ່າທົນກັບ
ພວກເຈົ້າ ຖ້າຫາກພວກເຈົ້າບໍ່ກັບໃຈ.
16 ເພາະມີສັນຍາຢູ່ຫລາຍຂໍ້ທີ່ [ກ]ໃຫ້ໄວ້
ກັບຊາວເລມັນ; ເປັນຍ້ອນ [ຂ]ຮີດຄອງປະເພ
ນີຂອງບັນພະບຸລຸດຂອງພວກເຂົາທີ່ເຮັດ
ໃຫ້ພວກເຂົາຢູ່ໃນສະພາບຂອງ [ຄ]ຄວາມ
ໂງ່ຈ້າ; ສະນັ້ນ ພຣະຜູ້ເປັນເຈົ້າຈະເມດຕາ
ພວກເຂົາ ແລະ ຕໍ່ການເປັນຢູ່ຂອງພວກ
ເຂົາໃຫ້ [ງ]ຍາວນານອອກໄປໃນແຜ່ນດິນ.
17 ແລະ ໃນໄລຍະເວລາໜຶ່ງ ພວກເຂົາ
ຈະຖືກ [ກ]ນຳມາໃຫ້ເຊື່ອຖືໃນພຣະຄຳຂອງ
ພຣະອົງໃຫ້ຮູ້ເຖິງຄວາມບໍ່ຖືກຕ້ອງຂອງຮີດ
ຄອງປະເພນີຂອງບັນພະບຸລຸດຂອງພວກ
ເຂົາ; ແລະ ຄົນເປັນຈຳນວນຫລວງຫລາຍ
ຂອງພວກເຂົາຈະລອດ, ເພາະພຣະຜູ້ເປັນ
ເຈົ້າຈະເມດຕາທຸກຄົນທີ່ [ຂ]ເອີ້ນຫາພຣະ
ນາມຂອງພຣະອົງ.
18 ແຕ່ ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ ກ່າວ ກັບ
ພວກເຈົ້າວ່າ ຖ້າຫາກພວກເຈົ້າຂືນຢູ່ກັບ
ຄວາມຊົ່ວຮ້າຍ ວັນເວລາຂອງພວກເຈົ້າກໍ
ຈະບໍ່ຍືນນານໃນແຜ່ນດິນນີ້, ເພາະ [ກ]ຊາວ
ເລມັນຈະຖືກສົ່ງມາຫາພວກເຈົ້າ; ແລະ ຖ້າ
ຫາກພວກເຈົ້າບໍ່ກັບໃຈ ພວກເຂົາຈະມາ
ໃນເວລາທີ່ພວກເຈົ້າບໍ່ຮູ້ ແລະ ຈະມາຢ້ຽມ
ຢາມພວກເຈົ້າດ້ວຍຄວາມພິນາດ [ຂ]ສິ້ນ
ແລະ ມັນຈະເປັນໄປຕາມ [ຄ]ພຣະພິໂລດອັນ
ຮຸນແຮງຂອງພຣະຜູ້ເປັນເຈົ້າ.
19 ເພາະພຣະອົງຈະບໍ່ຍອມໃຫ້ພວກ
ເຈົ້າມີຊີວິດຢູ່ໃນຄວາມຊົ່ວຮ້າຍຂອງພວກ
ເຈົ້າ, ເພື່ອທຳລາຍຜູ້ຄົນຂອງພຣະອົງ.
ຂ້າພະເຈົ້າກ່າວກັບພວກເຈົ້າວ່າ, ບໍ່ເລີຍ;
ພຣະອົງຈະຍອມໃຫ້ຊາວເລມັນ [ກ]ທຳລາຍ
ຜູ້ຄົນຂອງພຣະອົງທັງໝົດທີ່ມີຊື່ວ່າຊາວ
ນີໄຟເສຍດີກວ່າ, ຖ້າຫາກເປັນໄປໄດ້ວ່າ
ພວກເຂົາຈະ [ຂ]ຕົກຢູ່ໃນບາບ ແລະ ໃນການ
ລ່ວງລະເມີດ, ເຖິງແມ່ນພວກເຂົາໄດ້ຮັບ
ຄວາມສະຫວ່າງ ແລະ ຄວາມຮູ້ຫລາຍຢ່າງ
ຈາກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາແລ້ວ;
20 ແທ້ຈິງແລ້ວ, ຫລັງຈາກທີ່ເປັນຜູ້ຄົນ
ທີ່ໂປດປານທີ່ສຸດຂອງພຣະຜູ້ເປັນເຈົ້າ;
ແທ້ຈິງແລ້ວ, ຫລັງຈາກທີ່ເປັນຜູ້ຄົນທີ່ໂປດ
ປານທີ່ສຸດກວ່າທຸກປະຊາຊາດ, ທຸກຕະ
ກຸນ, ທຸກພາສາ, ຫລື ທຸກຜູ້ຄົນທັງປວງ;

14 ກ 2 ນຟ 5:20–24; ແອວ 38:1.
15 ກ ມທ 11:22, 24.
16 ກ ແອວ 17:15.
ຂ ມຊຢ 10:12 (ເບິ່ງ ຂໍ້ທີ 11–17).
ຄ ມຊຢ 3:11.
ງ ຮລມ 15:10–12.
17 ກ ອນ 1:13.
ຂ ແອວ 38:5; ຄພ 3:8.
18 ກ ແອວ 16:2–3.
ຂ ແອວ 16:9.
ຄ ແອວ 8:29.
19 ກ 1 ນຟ 12:15, 19–20; ແອວ 45:10–14.
ຂ ແອວ 24:30.

ຫລັງຈາກທີ່ທຸກສິ່ງທຸກຢ່າງໄດ້ໃຫ້ເປັນ [ກ]ທີ່
ປະກົດແຈ້ງແກ່ພວກເຂົາແລ້ວຕາມຄວາມ
ປາດຖະໜາ ແລະ ສັດທາຂອງພວກເຂົາ
ແລະ ຄຳອະທິຖານກ່ຽວກັບ ເລື່ອງທີ່ເປັນ
ມາ ແລະ ທີ່ເປັນຢູ່ ແລະ ທີ່ຈະມາເຖິງ.
21 ໂດຍທີ່ໄດ້ຮັບການຢ້ຽມຢາມໂດຍ
ພຣະວິນຍານຂອງພຣະເຈົ້າ; ໂດຍທີ່ໄດ້
ສົນທະນາກັບເຫລົ່າທູດ, ແລະ ໂດຍທີ່ສຸລະ
ສຽງຂອງພຣະຜູ້ເປັນເຈົ້າໄດ້ຮັບສັ່ງນຳອີກ;
ແລະ ໂດຍທີ່ມີວິນຍານແຫ່ງການທຳນາຍ
ແລະ ວິນຍານແຫ່ງການເປີດເຜີຍ, ແລະ
ມີຂອງປະທານຫລາຍຢ່າງນຳອີກ, ຂອງ
ປະທານແຫ່ງການເວົ້າພາສາ, ແລະ ຂອງ
ປະທານແຫ່ງການສັ່ງສອນ, ແລະ ຂອງ
ປະທານແຫ່ງພຣະວິນຍານບໍລິສຸດ, ແລະ
ຂອງປະທານແຫ່ງ [ກ]ການແປ;
22 ແທ້ຈິງແລ້ວ, ຫລັງຈາກທີ່ໄດ້ຮັບການ
[ກ]ປົດປ່ອຍໂດຍພຣະເຈົ້າໃຫ້ອອກຈາກ
ແຜ່ນດິນເຢຣູຊາເລັມໂດຍພຣະຫັດຂອງ
ພຣະຜູ້ເປັນເຈົ້າ; ໂດຍໄດ້ຮັບການໂຜດ
ໃຫ້ພົ້ນຈາກຄວາມອຶດຢາກ, ແລະ ໃຫ້ພົ້ນ
ຈາກຄວາມເຈັບປ່ວຍ, ແລະ ໃຫ້ພົ້ນຈາກ
ພະຍາດຕ່າງໆ; ແລະ ພວກເຂົາໄດ້ເຂັ້ມ
ແຂງຂຶ້ນໃນການສູ້ຮົບເພື່ອພວກເຂົາຈະ
ບໍ່ໄດ້ຖືກທຳລາຍ; ແລະ ໂດຍທີ່ໄດ້ຖືກນຳ
ພາອອກມາຈາກ [ຂ]ຄວາມເປັນທາດຫລາຍ
ຕໍ່ຫລາຍເທື່ອ, ແລະ ໂດຍທີ່ໄດ້ຮັບການດູ
ແລ ແລະ ປົກປັກຮັກສາຈົນກະທັ້ງດຽວນີ້;
ແລະ ພວກເຂົາໄດ້ຈະເລີນຮຸ່ງເຮືອງຂຶ້ນຈົນ
ວ່າຮັ່ງມີເປັນດີໃນສິ່ງຂອງຫລາຍຢ່າງ—
23 ແລະ ບັດນີ້ຈົ່ງເບິ່ງ ຂ້າພະເຈົ້າກ່າວ
ກັບພວກເຈົ້າວ່າ ຖ້າຫາກຜູ້ຄົນພວກນີ້ ຊຶ່ງ
ໄດ້ຮັບພອນມາຢ່າງຫລວງຫລາຍຈາກ
ພຣະຫັດຂອງພຣະຜູ້ເປັນເຈົ້າຍັງລ່ວງ
ລະເມີດ, ແລະ ເຮັດສິ່ງກົງກັນຂ້າມກັບ
ຄວາມສະຫວ່າງ ແລະ ຄວາມຮູ້ທີ່ພວກ
ເຂົາມີຢູ່ແລ້ວ, ຂ້າພະເຈົ້າກໍກ່າວກັບພວກ
ເຈົ້າຖ້າຫາກເປັນໄປແບບນີ້, ພວກເຂົາຈະ
ຕົກໄປສູ່ການລ່ວງລະເມີດ, ແລະ ພຣະອົງ
ຈະ [ກ]ທົນກັບຊາວເລມັນໄດ້ຫລາຍກວ່າທົນ
ກັບພວກເຂົາ.
24 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ຕໍ່
[ກ]ສັນຍາອອກໃຫ້ຊາວເລມັນ, ແຕ່ບໍ່ໄດ້ຕໍ່ໃຫ້
ພວກເຈົ້າ ຖ້າຫາກພວກເຈົ້າລ່ວງລະເມີດ;
ເພາະພຣະຜູ້ເປັນເຈົ້າບໍ່ໄດ້ສັນຍາໄວ້ຢ່າງ
ແຈ່ມແຈ້ງບໍ ແລະ ກຳນົດໄວ້ຢ່າງແນ່ນອນ
ບໍວ່າຖ້າຫາກພວກເຈົ້າຈະກະບົດຕໍ່ພຣະ
ອົງແລ້ວ ພວກເຈົ້າຈະຖືກທຳລາຍໃຫ້ໝົດ
ໄປຈາກຜືນແຜ່ນດິນໂລກ?
25 ແລະ ບັດນີ້ດ້ວຍເຫດນີ້, ເພື່ອພວກ
ເຈົ້າຈະບໍ່ຖືກທຳລາຍ, ພຣະຜູ້ເປັນເຈົ້າຈະ
ສົ່ງທູດຂອງພຣະອົງລົງມາຢ້ຽມຢາມຜູ້ຄົນ
ຂອງພຣະອົງຫລາຍຄົນ, ປະກາດແກ່ພວກ
ເຂົາວ່າພວກເຂົາຈະຕ້ອງອອກໄປປ່າວ
ເຕືອນຢ່າງສຸດກຳລັງຕໍ່ຜູ້ຄົນພວກນີ້, ໂດຍ
ກ່າວວ່າ: ພວກເຈົ້າຈົ່ງ [ກ]ກັບໃຈເຖີດ, ເພາະ
ວ່າອານາຈັກສະຫວັນໃກ້ຈະມາເຖິງແລ້ວ;
26 ແລະ ຍັງອີກ [ກ]ບໍ່ເທົ່າໃດມື້ຈາກມື້ນີ້
ໄປ ພຣະບຸດຂອງພຣະເຈົ້າຈະສະເດັດມາ
ໃນລັດສະໝີພາບຂອງພຣະອົງ; ແລະ ລັດ
ສະໝີພາບຂອງພຣະອົງຈະເປັນລັດສະໝີ
ພາບຂອງ [ຂ]ພຣະອົງດຽວທີ່ຖືກກຳເນີດຈາກ

20 *ກ* ຄມພ ເປີດເຜີຍ, ການເປີດເຜີຍ.
21 *ກ* ອມນ 1:20; ມຊຢ 8:13–19; 28:11–17.
22 *ກ* 2 ນຟ 1:4.
*ຂ* ມຊຢ 27:16.
23 *ກ* ມທ 11:22–24.
24 *ກ* 2 ນຟ 30:4–6; ຄພ 3:20.
25 *ກ* ແອວ 7:9; ຮລມ 5:32.
26 *ກ* ແອວ 7:7.
*ຂ* ຄມພ ອົງດຽວທີ່ຖືກກຳເນີດ.

ພຣະບິດາ, ເຕັມປ່ຽມໄປດ້ວຍ [ຄ]ພຣະຄຸນ, ຄວາມທ່ຽງທຳ, ແລະ ຄວາມຈິງ, ເຕັມປ່ຽມໄປດ້ວຍຄວາມອົດທົນ, [ງ]ຄວາມເມດຕາ, ແລະ ຄວາມອົດກັ້ນ, [ຈ]ໄດ້ຍິນສຽງຮ້ອງຫາຂອງຜູ້ຄົນຂອງພຣະອົງຢ່າງວ່ອງໄວ ແລະ ທີ່ຈະຕອບຄຳອະທິຖານຂອງພວກເຂົາ.

27 ແລະ ຈົ່ງເບິ່ງ, ພຣະອົງຈະສະເດັດມາເພື່ອ [ກ]ໄຖ່ຜູ້ທີ່ໄດ້ຮັບ [ຂ]ບັບຕິສະມາໄວ້ກັບການກັບໃຈ, ຜ່ານສັດທາໃນພຣະນາມຂອງພຣະອົງ.

28 ສະນັ້ນ, ພວກເຈົ້າຈົ່ງຕຽມທາງຂອງພຣະຜູ້ເປັນເຈົ້າເຖີດ, ເພາະວ່າເວລາໃກ້ເຂົ້າມາເຖິງແລ້ວທີ່ມະນຸດທັງປວງຈະເກັບກ່ຽວລາງວັນຂອງ [ກ]ຜົນງານຂອງຕົນເອງຕາມສິ່ງທີ່ພວກເຂົາກະທຳມາ—ຖ້າຫາກພວກເຂົາຊອບທຳ ພວກເຂົາກໍຈະ [ຂ]ເກັບກ່ຽວຄວາມລອດຂອງຈິດວິນຍານຂອງພວກເຂົາ, ອັນເປັນໄປຕາມອຳນາດ ແລະ ການປົດປ່ອຍຂອງພຣະເຢຊູຄຣິດ; ແລະ ຖ້າຫາກພວກເຂົາຊົ່ວ, ພວກເຂົາກໍຈະເກັບກ່ຽວ [ຄ]ຄວາມອັບປະໂຫຍດຂອງຈິດວິນຍານຂອງພວກເຂົາ, ອັນເປັນໄປຕາມອຳນາດ ແລະ ການຈັບກຸມຂອງມານ.

29 ບັດນີ້ຈົ່ງເບິ່ງ, ນີ້ຄືສຽງຂອງທູດ, ປ່າວເຕືອນຕໍ່ຜູ້ຄົນ.

30 ແລະ ບັດນີ້, ພີ່ນ້ອງ [ກ]ທີ່ຮັກແພງຂອງຂ້າພະເຈົ້າ, ເພາະວ່າພວກເຈົ້າເປັນພີ່ນ້ອງຂອງຂ້າພະເຈົ້າ, ແລະ ພວກເຈົ້າຄວນເປັນທີ່ຮັກຫອມ, ແລະ ພວກເຈົ້າຄວນນຳເອົາວຽກງານອັນເໝາະສົມເພື່ອການກັບໃຈອອກມາ, ເຫັນວ່າໃຈຂອງພວກເຈົ້າຖືກເຮັດໃຫ້ແຂງກະດ້າງທີ່ສຸດຕໍ່ພຣະຄຳຂອງພຣະເຈົ້າ, ແລະ ເຫັນວ່າພວກເຈົ້າເປັນຄົນ [ຂ]ຫລົງທາງ ແລະ ຕົກໄປ.

31 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເວລາຂ້າພະເຈົ້າແອວມາກ່າວຄຳເຫລົ່ານີ້ແລ້ວ, ຈົ່ງເບິ່ງ, ປະຊາຊົນກໍຄຽດແຄ້ນໃຫ້ຂ້າພະເຈົ້າ ເພາະວ່າຂ້າພະເຈົ້າໄດ້ກ່າວຕໍ່ພວກເຂົາວ່າ ພວກເຂົາເປັນຄົນທີ່ມີໃຈແຂງກະດ້າງ ແລະ [ກ]ແຂງຄໍ.

32 ແລະ ເພາະວ່າຂ້າພະເຈົ້າເວົ້າກັບພວກເຂົາອີກວ່າ ພວກເຂົາເປັນຄົນຫລົງທາງ ແລະ ຕົກໄປ ພວກເຂົາຈຶ່ງຄຽດແຄ້ນໃຫ້ຂ້າພະເຈົ້າ ແລະ ພະຍາຍາມທີ່ຈະຈັບເອົາຂ້າພະເຈົ້າເຂົ້າຄຸກ.

33 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າບໍ່ຍອມໃຫ້ພວກເຂົາຈັບຂ້າພະເຈົ້າເຂົ້າຄຸກໃນເວລານັ້ນ.

34 ແລະ ເຫດການໄດ້ບັງເກີດຂຶ້ນຄື ແອມມິວເລັກໄດ້ອອກໄປຢືນຢູ່ຕໍ່ໜ້າພວກເຂົາ, ແລະ ເລີ່ມສັ່ງສອນພວກເຂົາອີກ. ແລະ ບັດນີ້ [ກ]ຄຳເວົ້າຂອງແອມມິວເລັກບໍ່ໄດ້ຖືກຂຽນໄວ້ທັງໝົດ, ເຖິງຢ່າງໃດກໍຕາມ, ພາກສ່ວນໜຶ່ງຂອງຄຳເວົ້າຂອງລາວໄດ້ມີຂຽນໄວ້ຢູ່ໃນໜັງສືເຫລັ້ມນີ້.

## ບົດທີ 10

*ລີໄຮເປັນເຊື້ອສາຍຂອງມານາເຊ—ແອມມິວເລັກທວນຄືນຄຳສັ່ງຂອງທູດທີ່ສັ່ງໃຫ້ລາວເບິ່ງແຍງແອວມາ—ຄຳອະທິຖານຂອງຄົນຊອບທຳເປັນເຫດໃຫ້ຜູ້ຄົນໄດ້ຮັບ*

26 ຄ ຄມພ ພຣະຄຸນ.
ງ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
ຈ ພບຍ 26:7.
27 ກ ຄມພ ໄຖ່, ການໄຖ່, ຖືກໄຖ່.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
28 ກ ຄພ 1:10; 6:33.
ຂ ພສສ 7:16.
ຄ ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
30 ກ 1 ຍຮ 4:11.
ຂ ແອວ 12:22.
31 ກ 2 ນຟ 25:28; ມຊຢ 3:14.
34 ກ ແອວ 10.

*ການໄວ້ຊີວິດ—ທະນາຍຄວາມ ແລະ ຜູ້ຕັດ
ສິນທີ່ບໍ່ຊອບທຳວາງຮາກຖານແຫ່ງການ
ທຳລາຍຕໍ່ຜູ້ຄົນ. ປະມານ 82 ປີ ກ່ອນ ຄ.ສ.*

1 ບັດ ນີ້ ນີ້ ແມ່ນ [ກ]ຄຳ ເວົ້າ ຊຶ່ງ [ຂ]ແອມ
ມິວເລັກໄດ້ສັ່ງສອນຜູ້ຄົນຜູ້ຢູ່ໃນແຜ່ນດິນ
ອຳໂມນໄນຮາ, ມີຄວາມວ່າ:
2 ຂ້າພະ ເຈົ້າຄື ແອມ ມິວເລັກ; ຂ້າພະ
ເຈົ້າເປັນລູກຊາຍຂອງກິດໂດນາ, ຜູ້ເປັນ
ລູກຊາຍຂອງອິດຊະມາເອນ, ຜູ້ຊຶ່ງເປັນຜູ້
ສືບເຊື້ອສາຍຂອງອະມີນາໄດ; ແລະ ອະ
ມີນາໄດຜູ້ດຽວກັນທີ່ເປັນຜູ້ແປຄວາມໝາຍ
ຂອງຂໍ້ຄວາມທີ່ຢູ່ໃນກຳແພງພຣະວິຫານ,
ຊຶ່ງໄດ້ຂຽນໄວ້ໂດຍນິ້ວພຣະຫັດຂອງພຣະ
ເຈົ້າ.
3 ແລະ ອະມີນາໄດເປັນຜູ້ສືບເຊື້ອສາຍ
ຂອງ ນີໄຟ, ຜູ້ເປັນລູກ ຊາຍຂອງ ລີໄຮ, ຜູ້
ອອກ ຈາກແຜ່ນດິນເຢຣູຊາເລັມ, ຊຶ່ງເປັນ
ຜູ້ສືບເຊື້ອສາຍຂອງ [ກ]ມານາເຊຜູ້ເປັນລູກ
ຊາຍຂອງ [ຂ]ໂຢເຊັບ, ຜູ້ຖືກ [ຄ]ຂາຍໄປຫາ
ເອຢິບດ້ວຍມືຂອງພວກອ້າຍຂອງລາວ.
4 ແລະ ຈົ່ງເບິ່ງ, ຂ້າພະເຈົ້າເອງເປັນຄົນ
ທີ່ຖືກນັບຖືພໍສົມຄວນ ໃນບັນດາຄົນທັງ
ຫລາຍທີ່ຮູ້ຈັກຂ້າພະເຈົ້າ; ແທ້ຈິງແລ້ວ,
ແລະ ຈົ່ງເບິ່ງ, ຂ້າພະເຈົ້າມີພີ່ນ້ອງ ແລະ
[ກ]ໝູ່ເພື່ອນຫລາຍຄົນ, ແລະ ຂ້າພະເຈົ້າມີ
ສິ່ງຂອງອັນມີຄ່າຢ່າງຫລວງຫລາຍດ້ວຍ
ການຫັດຖະກຳຂອງຂ້າພະເຈົ້າ.
5 ເຖິງຢ່າງໃດກໍຕາມ, ຫລັງຈາກທັງໝົດ
ນີ້, ຂ້າພະເຈົ້າກໍບໍ່ເຄີຍຮູ້ຈັກຫຍັງຫລາຍ
ກ່ຽວກັບທາງຂອງພຣະຜູ້ເປັນເຈົ້າ, ແລະ
[ກ]ຄວາມລຶກລັບ ແລະ ອຳນາດອັນໜ້າອັດ
ສະຈັນຂອງພຣະອົງ. ຂ້າພະເຈົ້າໄດ້ເວົ້າວ່າ
ຂ້າພະເຈົ້າບໍ່ເຄີຍຮູ້ກ່ຽວກັບເລື່ອງເຫລົ່ານີ້
ຫລາຍ; ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຜິດ, ເພາະ
ຂ້າພະເຈົ້າໄດ້ເຫັນຄວາມລຶກລັບຂອງ
ພຣະອົງ ແລະ ອຳນາດອັນໜ້າອັດສະຈັນ
ຂອງພຣະອົງມາຫລາຍແລ້ວ; ແທ້ຈິງແລ້ວ,
ແມ່ນເປັນການຮັກສາຊີວິດຂອງຜູ້ຄົນພວກ
ນີ້.
6 ເຖິງ ຢ່າງ ໃດ ກໍ ຕາມ, ຂ້າ ພະ ເຈົ້າ ໄດ້
ເຮັດໃຈແຂງກະດ້າງ, ເພາະວ່າຂ້າພະເຈົ້າ
ຖືກ [ກ]ຮຽກຮ້ອງຫລາຍເທື່ອແລ້ວ ແລະ ຂ້າ
ພະເຈົ້າບໍ່ຍອມ [ຂ]ຟັງ; ສະນັ້ນ ຂ້າພະເຈົ້າ
ຈຶ່ງຮູ້ກ່ຽວກັບເລື່ອງເຫລົ່ານີ້, ເຖິງຢ່າງໃດກໍ
ຕາມ, ຂ້າພະເຈົ້າຍັງບໍ່ຍອມຮັບຮູ້; ສະນັ້ນ
ຂ້າພະເຈົ້າຈຶ່ງກະບົດຕໍ່ພຣະເຈົ້າໃນຄວາມ
ຊົ່ວຮ້າຍຂອງໃຈຂອງຂ້າພະເຈົ້າ, ຈົນເຖິງ
ວັນທີສີ່ຂອງເດືອນທີເຈັດນີ້, ຊຶ່ງຢູ່ໃນປີທີ
ສິບແຫ່ງການປົກຄອງຂອງຜູ້ຕັດສິນ.
7 ໃນຂະນະທີ່ຂ້າພະເຈົ້າກຳລັງເດີນທາງ
ໄປຢ້ຽມຢາມຍາດພີ່ນ້ອງທີ່ຢູ່ໃກ້ຄຽງຜູ້ໜຶ່ງ,
ຈົ່ງເບິ່ງ [ກ]ທູດອົງໜຶ່ງຂອງພຣະຜູ້ເປັນເຈົ້າ
ໄດ້ມາປະກົດຕໍ່ໜ້າຂ້າພະເຈົ້າ ແລະ ກ່າວ
ວ່າ: ແອມມິວເລັກ, ຈົ່ງກັບຄືນໄປເຮືອນ
ຂອງເຈົ້າ ເພາະວ່າເຈົ້າຈະໄດ້ບົວລະບັດ
ສາດສະດາຜູ້ໜຶ່ງຂອງພຣະຜູ້ເປັນເຈົ້າ;
ແທ້ຈິງແລ້ວ, ຄືສາດສະດາທີ່ບໍລິສຸດຜູ້ຖືກ
ເລືອກຈາກພຣະເຈົ້າ; ເພາະເພິ່ນໄດ້ [ຂ]ຖື
ສິນອົດເຂົ້າມາຫລາຍມື້ແລ້ວ; ເພາະບາບ
ຂອງຜູ້ຄົນພວກນີ້ ແລະ ເພິ່ນໄດ້ອຶດຫິວ,
ແລະ ຈົ່ງໃຫ້ເຈົ້າ [ຄ]ຮັບເອົາເພິ່ນເຂົ້າໄປ

**10** 1*ກ* ແອວ 9:34.
*ຂ* ແອວ 8:21–29.
3*ກ* ປຖກ 41:51; 1 ຂຄ 9:3.
*ຂ* ຄມພ ໂຢເຊັບ, ລູກຊາຍຂອງຢາໂຄບ.
*ຄ* ປຖກ 37:29–36.
4*ກ* ແອວ 15:16.
5*ກ* ຄມພ ຄວາມລຶກລັບຂອງພຣະເຈົ້າ.
6*ກ* ແອວ 5:37.
*ຂ* ຄພ 39:9.
7*ກ* ແອວ 8:20.
*ຂ* ແອວ 5:46; 6:6. ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
*ຄ* ກຈກ 10:30–35.

ໃນເຮືອນຂອງເຈົ້າ ແລະ ບົວລະບັດເພິ່ນ,
ແລະ ເພິ່ນຈະໃຫ້ພອນແກ່ເຈົ້າ ແລະ ເຮືອນ
ຊານ ຂອງເຈົ້າ; ແລະ ພອນຂອງພຣະຜູ້
ເປັນເຈົ້າຈະສະຖິດຢູ່ກັບເຈົ້າ ແລະ ເຮືອນ
ຊານຂອງເຈົ້າ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຮັດຕາມຄຳເວົ້າຂອງທູດອົງ
ນັ້ນ, ແລ້ວໄດ້ກັບຄືນໄປເຮືອນຂອງຂ້າພະ
ເຈົ້າ. ແລະ ຂະນະທີ່ຂ້າພະເຈົ້າກຳລັງເດີນ
ທາງກັບໄປນັ້ນ ຂ້າພະເຈົ້າໄດ້ພົບກັບ [ກ]ຄົນ
ຜູ້ທີ່ທູດໄດ້ເວົ້າກັບຂ້າພະເຈົ້າວ່າ: ເຈົ້າຈົ່ງ
ຮັບເອົາເພິ່ນເຂົ້າໄປໃນເຮືອນຂອງເຈົ້າ—
ແລະ ຈົ່ງເບິ່ງ ເປັນຄົນຜູ້ດຽວກັນນີ້ທີ່ເວົ້າ
ກັບພວກເຈົ້າກ່ຽວກັບເລື່ອງຂອງພຣະເຈົ້າ.

9 ແລະ ທູດກ່າວກັບຂ້າພະເຈົ້າວ່າ ເພິ່ນ
ເປັນຄົນ [ກ]ບໍລິສຸດ; ດັ່ງນັ້ນ ຂ້າພະເຈົ້າຈຶ່ງ
ຮູ້ວ່າເພິ່ນເປັນຄົນບໍລິສຸດ ເພາະທູດຂອງ
ພຣະເຈົ້າໄດ້ກ່າວໄວ້.

10 ແລະ ອີກຢ່າງໜຶ່ງຂ້າພະເຈົ້າຮູ້ວ່າ
ເລື່ອງທີ່ເພິ່ນໃຫ້ຖ້ອຍຄຳໄປນັ້ນເປັນຄວາມ
ຈິງ; ເພາະຈົ່ງເບິ່ງ ຂ້າພະເຈົ້າກ່າວກັບ
ພວກເຈົ້າວ່າ ຕາບໃດທີ່ພຣະຜູ້ເປັນເຈົ້າ
ຊົງພຣະຊົນຢູ່, ພຣະອົງຈະສົ່ງ [ກ]ທູດຂອງ
ພຣະອົງລົງມາ ເພື່ອສະແດງເລື່ອງເຫລົ່ານີ້
ໃຫ້ປະຈັກແກ່ຂ້າພະເຈົ້າ; ແລະ ສິ່ງນີ້ພຣະ
ອົງໄດ້ກະທຳໃນຂະນະທີ່ແອວມາຜູ້ນີ້ [ຂ]ຢູ່ທີ່
ເຮືອນຂອງຂ້າພະເຈົ້າ.

11 ເພາະຈົ່ງເບິ່ງ, ແອວມາໄດ້ [ກ]ໃຫ້ພອນ
ແກ່ເຮືອນຊານຂອງຂ້າພະເຈົ້າ, ແລະ ເພິ່ນ
ໄດ້ໃຫ້ພອນແກ່ຂ້າພະເຈົ້ານຳອີກ, ແລະ
ຜູ້ຍິງຂອງຂ້າພະເຈົ້າ, ແລະ ລູກຂອງຂ້າ
ພະເຈົ້າ, ແລະ ບິດາຂອງຂ້າພະເຈົ້າ ແລະ
ຍາດພີ່ນ້ອງຂອງຂ້າພະເຈົ້າ; ແທ້ຈິງແລ້ວ,
ຈົນກະທັ້ງແມ່ນແຕ່ຍາດພີ່ນ້ອງຂອງຂ້າພະ
ເຈົ້າທັງໝົດ ເພິ່ນກໍໄດ້ໃຫ້ພອນແກ່ພວກ
ເຂົາ, ແລະ ພອນຂອງພຣະຜູ້ເປັນເຈົ້າສະ
ຖິດຢູ່ກັບພວກເຮົາຕາມຄຳເວົ້າທີ່ເພິ່ນໄດ້
ເວົ້າໄວ້.

12 ແລະ ບັດນີ້, ເມື່ອແອມມິວເລັກເວົ້າ
ຂໍ້ຄວາມນີ້ແລ້ວ ຜູ້ຄົນເລີ່ມແປກໃຈໂດຍທີ່
ເຫັນວ່າມີພະຍານ [ກ]ຫລາຍກວ່າໜຶ່ງຄົນທີ່
ໃຫ້ຂໍ້ຄວາມກ່ຽວກັບເລື່ອງທີ່ພວກເຂົາຖືກ
ກ່າວຫາ, ແລະ ກ່ຽວກັບເລື່ອງທີ່ຈະມາເຖິງ
ນຳອີກ, ອັນເປັນໄປຕາມວິນຍານແຫ່ງການ
ທຳນາຍຊຶ່ງມີຢູ່ກັບພວກເພິ່ນ.

13 ເຖິງຢ່າງໃດກໍຕາມ, ຍັງມີບາງຄົນໃນ
ບັນດາພວກນັ້ນທີ່ຄິດຈະຖາມພວກເພິ່ນ,
ຄືໂດຍ [ກ]ເລ່ຫລ່ຽມຂອງພວກເຂົາເພື່ອ
ພວກເຂົາຈະໄດ້ຈັບຜິດໃນຄຳຂອງພວກ
ເພິ່ນ, ເພື່ອຈະໄດ້ມີພະຍານປັກປຳພວກ
ເພິ່ນ, ເພື່ອຈະໄດ້ສົ່ງພວກເພິ່ນໄປໃຫ້ຜູ້ຕັດ
ສິນຂອງພວກເຂົາ ເພື່ອພວກເພິ່ນຈະໄດ້
ຖືກຕັດສິນຕາມກົດໝາຍ, ແລະ ເພື່ອພວກ
ເພິ່ນຈະໄດ້ຖືກຂ້າ ຫລື ຖືກເອົາເຂົ້າຄຸກ,
ຕາມຄວາມຜິດຊຶ່ງພວກເຂົາຈະເຮັດໃຫ້
ເຫັນ ຫລື ເປັນພະຍານປັກປຳພວກເພິ່ນ
ໄດ້.

14 ບັດນີ້ຄົນເຫລົ່ານັ້ນທີ່ພະຍາຍາມທຳ
ລາຍ ແອວມາກັບແອມມິວເລັກເປັນພວກ
[ກ]ທະນາຍຄວາມທີ່ຖືກຈ້າງ ຫລື ຖືກກຳນົດ
ໂດຍຜູ້ຄົນທີ່ດຳເນີນກົດໝາຍໃນເວລາທີ່
ພວກເຂົາມີການພິຈາລະນາຄະດີ, ຫລື ໃນ
ການພິຈາລະນາຄວາມຜິດຂອງຜູ້ຄົນຕໍ່ໜ້າ
ຜູ້ຕັດສິນ.

8 ກ ແອວ 8:19–21.
9 ກ ຄມພ ສັກສິດ,
ຄວາມສັກສິດ.
10 ກ ແອວ 11:30–31.
ຂ ແອວ 8:27.
11 ກ ແອວ 8:22.
12 ກ ແອວ 9:6.
13 ກ ແອວ 11:21.
14 ກ ແອວ 10:24;
11:20–21; 14:18.

15 ບັດ ນີ້ ພວກ ທະນາຍ ຄວາມ ເຫລົ່າ ນີ້
ເປັນຜູ້ຮູ້ວິທີ ແລະ ເລ່ຫລ່ຽມທັງຫລາຍຂອງ
ຜູ້ຄົນ; ແລະ ນີ້ກໍເພື່ອເຮັດໃຫ້ພວກເຂົາຊໍາ
ນານໃນອາຊີບຂອງຕົນໄດ້.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາເລີ່ມຖາມແອມມິວເລັກ, ໂດຍ
ການກະທໍາເຊັ່ນນັ້ນພວກເຂົາຈະໄດ້ເຮັດ
ໃຫ້ລາວປ່ຽນແປງຄໍາເວົ້າຂອງລາວ, ຫລື
ໃຫ້ແອມມິວເລັກມີຄວາມບໍ່ແນ່ໃຈໃນສິ່ງທີ່
ລາວຈະເວົ້າ.
17 ແລະ ບັດນີ້ພວກເຂົາບໍ່ຮູ້ຈັກວ່າ ແອມ
ມິວເລັກຮູ້ຈັກເຖິງແຜນການຂອງພວກເຂົາ
ແລ້ວ. ແຕ່ເຫດການໄດ້ບັງເກີດຂຶ້ນ ໃນ
ຂະນະທີ່ພວກເຂົາເລີ່ມສອບຖາມລາວນັ້ນ,
ລາວໄດ້ [ກ]ຮູ້ຈັກຄວາມນຶກຄິດຂອງພວກ
ເຂົາແລ້ວ, ແລະ ລາວໄດ້ກ່າວກັບພວກເຂົາ
ວ່າ: ໂອ້ ພວກເຈົ້າ [ຂ]ລຸ້ນທີ່ຊົ່ວ ແລະ ເສຍ
ຄົນເອີຍ, ພວກທະນາຍຄວາມທີ່ໜ້າຊື່ໃຈ
ຄົດ, ເພາະພວກເຈົ້າກໍາລັງວາງຮາກຖານ
ຂອງມານ; ເພາະພວກເຈົ້າກໍາລັງວາງ [ຄ]ກັບ
ດັກ ແລະ ບ້ວງ ເພື່ອຈະຈັບເອົາຄົນບໍລິສຸດ
ຂອງພຣະເຈົ້າ.
18 ພວກ ເຈົ້າ ກໍາ ລັງ ວາງ ແຜນ [ກ]ບິດ
ເບືອນເສັ້ນທາງຂອງຄົນຊອບທໍາ, ແລະ
ເພື່ອນໍາເອົາພຣະພິໂລດຂອງພຣະເຈົ້າລົງ
ມາເທິງຫົວຂອງພວກເຈົ້າ, ຈົນວ່າຜູ້ຄົນ
ພວກນີ້ໄດ້ຮັບຄວາມພິນາດ.
19 ແທ້ຈິງແລ້ວ, ໂມໄຊຢາຜູ້ເປັນກະສັດ
ຄົນສຸດທ້າຍຂອງພວກເຮົາໄດ້ກ່າວໄວ້ດີ
ແລ້ວຕອນເພິ່ນກໍາລັງຈະມອບລາຊາອາ
ນາຈັກ, ໂດຍທີ່ບໍ່ມີໃຜຈະຮັບເລີຍ, ອັນເປັນ
ເຫດໃຫ້ຜູ້ຄົນພວກນີ້ໄດ້ຮັບການປົກຄອງ
ໂດຍສຽງຂອງຕົນເອງ—ແທ້ຈິງແລ້ວ, ເພິ່ນ
ໄດ້ເວົ້າໄວ້ດີແລ້ວວ່າ ຖ້າຫາກເວລາມາ
ເຖິງ ເມື່ອສຽງຂອງຜູ້ຄົນພວກນີ້ຈະ [ກ]ເລືອກ
ເອົາຄວາມຊົ່ວຮ້າຍ ນັ້ນຄືຖ້າຫາກເວລາຈະ
ມາເຖິງເມື່ອຜູ້ຄົນພວກນີ້ຈະຕົກໄປສູ່ການ
ລ່ວງລະເມີດ, ແລ້ວພວກເຂົາຈະສຸກເພື່ອ
ຄວາມພິນາດ.
20 ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກ
ເຈົ້າວ່າ ພຣະຜູ້ເປັນເຈົ້າພິພາກສາເລື່ອງ
ຄວາມຊົ່ວຮ້າຍຂອງພວກເຈົ້າດີແລ້ວ;
ພຣະອົງຮຽກຮ້ອງຜູ້ຄົນພວກນີ້ໂດຍສຽງ
ຂອງ [ກ]ທູດຂອງພຣະອົງດີແລ້ວວ່າ: ເຈົ້າຈົ່ງ
ກັບໃຈ, ກັບໃຈເຖີດ, ເພາະວ່າອານາຈັກ
ແຫ່ງສະຫວັນໃກ້ເຂົ້າມາເຖິງແລ້ວ.
21 ແທ້ຈິງແລ້ວ, ພຣະອົງຮຽກຮ້ອງດີ
ແລ້ວໂດຍສຽງຂອງທູດຂອງພຣະອົງວ່າ:
[ກ]ເຮົາຈະລົງມາໃນບັນດາຜູ້ຄົນຂອງເຮົາ,
ພ້ອມດ້ວຍຄວາມທ່ຽງທໍາ ແລະ ຄວາມຍຸດ
ຕິທໍາໃນພຣະຫັດຂອງເຮົາ.
22 ແທ້ຈິງແລ້ວ, ແລະ ຂ້າພະເຈົ້າກ່າວ
ກັບພວກເຈົ້າວ່າ ຖ້າຫາກບໍ່ແມ່ນຍ້ອນ [ກ]ຄໍາ
ອະທິຖານຂອງຄົນທີ່ຊອບທໍາຊຶ່ງຢູ່ໃນແຜ່ນ
ດິນນີ້ແລ້ວ, ວ່າແມ່ນແຕ່ຂະນະນີ້ພວກເຈົ້າ
ກໍຈະຖືກຢ້ຽມຢາມດ້ວຍຄວາມພິນາດໝົດ;
ບໍ່ແມ່ນແຕ່ຈະເປັນດ້ວຍ [ຂ]ນໍ້າຖ້ວມດັ່ງທີ່
ເປັນມາແລ້ວກັບຜູ້ຄົນໃນວັນເວລາຂອງ
ໂນອາ, ແຕ່ຈະເປັນດ້ວຍຄວາມອຶດຢາກ,
ແລະ ດ້ວຍພະຍາດໂລຄາ, ແລະ ດ້ວຍ
ດາບ.
23 ແຕ່ເປັນຍ້ອນ [ກ]ຄໍາອະທິຖານຂອງຄົນ

17 *ກ* ແອວ 12:3; 18:20, 32; ຄພ 6:16.
*ຂ* ມທ 3:7; ແອວ 9:8.
*ຄ* ຄພ 10:21–27.
18 *ກ* ກຈກ 13:10.
19 *ກ* ມຊຢ 29:27; ແອວ 2:3–7; ຣລມ 5:2.
20 *ກ* ແອວ 8:14–16; 13:22.
21 *ກ* ມຊຢ 13:34.
22 *ກ* ຢກບ 5:16; ມຊຢ 27:14–16.
*ຂ* ປຖກ 8:21; 3 ນຟ 22:8–10. ຄມພ ນໍ້າຖ້ວມໃນວັນເວລາຂອງໂນອາ.
23 *ກ* ຄມພ ອະທິຖານ, ການອະທິຖານ, ຄໍາອະທິຖານ.

ຊອບທຳທີ່ພວກເຈົ້າໄດ້ຮັບການໄວ້ຊີວິດ; ສະນັ້ນຖ້າ ຫາກ ພວກເຈົ້າຈະ ຂັບ ໄລ່ ຄົນ ທີ່ຊອບທຳອອກໄປຈາກບັນດາພວກເຈົ້າ ແລ້ວເມື່ອນັ້ນພຣະເຈົ້າຈະບໍ່ຫ້າມພຣະຫັດ ຂອງພຣະອົງ; ແຕ່ໃນຄວາມຄຽດແຄ້ນອັນ ຮ້າຍແຮງຂອງພຣະອົງ, ພຣະອົງຈະສະ ເດັດມາລົງໂທດພວກເຈົ້າ; ເມື່ອນັ້ນພວກ ເຈົ້າຈະຖືກລົງໂທດດ້ວຍຄວາມອຶດຢາກ, ດ້ວຍພະຍາດໂລຄາ, ແລະ ດ້ວຍດາບ; ແລະ [ຂ]ເວລານັ້ນຈະມາຮອດໃນບໍ່ຊ້ານີ້ຖ້າ ຫາກພວກເຈົ້າບໍ່ກັບໃຈ.

24 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ ຄື ຜູ້ຄົນໄດ້ຄຽດແຄ້ນໃຫ້ແອມມິວເລັກ ຫລາຍຂຶ້ນ, ແລະ ພວກເຂົາຮ້ອງອອກມາ, ມີຄວາມວ່າ: ຊາຍຄົນນີ້ໝິ່ນປະໝາດກົດ ອັນທ່ຽງທຳຂອງພວກເຮົາ ແລະ ທະນາຍ ຄວາມຜູ້ສະຫລາດຂອງພວກເຮົາ ຊຶ່ງພວກ ເຮົາໄດ້ເລືອກໄວ້.

25 ແຕ່ ແອມມິວເລັກໄດ້ເດ່ມືອອກໄປ ແລະ ຮ້ອງດ້ວຍສຸດກຳລັງຕໍ່ພວກເຂົາ, ມີ ຄວາມວ່າ: ໂອ້ ພວກເຈົ້າລຸ້ນທີ່ຊົ່ວ ແລະ ເສຍຄົນເອີຍ, ເປັນດ້ວຍເຫດໃດຊາຕານ ຈຶ່ງມີອຳນາດເໜືອໃຈຂອງພວກເຈົ້າ? ເປັນ ດ້ວຍເຫດໃດພວກເຈົ້າຈຶ່ງຍອມຕົວໃຫ້ມັນ ຈົນວ່າມັນມີອຳນາດເໜືອກວ່າພວກເຈົ້າ, ຈົນເຮັດໃຫ້ຕາຂອງພວກເຈົ້າ [ກ]ບອດ, ເພື່ອ ພວກເຈົ້າຈະບໍ່ເຂົ້າໃຈຄຳເວົ້າຊຶ່ງເວົ້າໄປ ຕາມຄວາມຈິງແທ້ໆ?

26 ເພາະຈົ່ງເບິ່ງ, ຂ້າພະເຈົ້າໄດ້ໃຫ້ຖ້ອຍ ຄຳທີ່ຕໍ່ຕ້ານກັບກົດໝາຍຂອງພວກເຈົ້າ ບໍ? ພວກເຈົ້າບໍ່ເຂົ້າໃຈ; ພວກເຈົ້າເວົ້າວ່າ ຂ້າພະເຈົ້າເວົ້າຕໍ່ຕ້ານກົດໝາຍຂອງພວກ ເຈົ້າ; ແຕ່ຂ້າພະເຈົ້າບໍ່ໄດ້ເຮັດຢ່າງນັ້ນ, ຂ້າ ພະເຈົ້າເວົ້າສະໜັບສະໜູນກົດໝາຍຂອງ ພວກເຈົ້າ, ເພື່ອກ່າວໂທດພວກເຈົ້າ.

27 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວ ກັບພວກເຈົ້າວ່າ, ຮາກຖານຂອງຄວາມ ພິນາດຂອງຜູ້ຄົນພວກນີ້ກຳລັງຈະຖືກວາງ ໄວ້ ໂດຍຄວາມບໍ່ຊອບທຳຂອງ [ກ]ພວກ ທະນາຍຄວາມ ແລະ ຜູ້ຕັດສິນຂອງພວກ ເຈົ້າ.

28 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ ຄື ເມື່ອແອມມິວເລັກເວົ້າຂໍ້ຄວາມນີ້ແລ້ວ ຜູ້ ຄົນໄດ້ຮ້ອງຕໍ່ຕ້ານລາວ, ມີຄວາມວ່າ: ບັດນີ້ ພວກເຮົາຮູ້ຈັກແລ້ວວ່າ ຊາຍຄົນນີ້ເປັນລູກ ຂອງມານ ເພາະວ່າລາວ [ກ]ເວົ້າຕົວະພວກ ເຮົາ; ເພາະວ່າລາວໄດ້ເວົ້າຕໍ່ຕ້ານກົດໝາຍ ຂອງພວກເຮົາ. ແລະ ບັດນີ້ລາວກ່າວວ່າ ລາວບໍ່ໄດ້ເວົ້າຕໍ່ຕ້ານ.

29 ແລະ ອີກຢ່າງໜຶ່ງ, ລາວໝິ່ນປະ ໝາດພວກທະນາຍຄວາມ ແລະ ຜູ້ຕັດສິນ ຂອງພວກເຮົາ.

30 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ ຄື ພວກທະນາຍຄວາມໄດ້ເກັບໃສ່ໃຈຂອງ ພວກເຂົາໄວ້ ເພື່ອພວກເຂົາຈະໄດ້ຈົດຈຳ ສິ່ງເຫລົ່ານີ້ໄວ້ເພື່ອຟ້ອງລາວ.

31 ແລະ ມີຄົນໜຶ່ງໃນບັນດາຜູ້ຄົນນັ້ນຜູ້ ມີຊື່ວ່າ ຊີເອສຣອມ. ບັດນີ້ລາວເປັນຄົນທີ່ ໄດ້ [ກ]ກ່າວໂທດແອມມິວເລັກ ແລະ ແອວມາ ຫລາຍກວ່າຄົນອື່ນ, ເພາະລາວເປັນຜູ້ມີ ຄວາມຊຳນານທີ່ສຸດຜູ້ໜຶ່ງ ໂດຍທີ່ມີທຸລະ ກິດຫລາຍຢ່າງໃນບັນດາຜູ້ຄົນ.

32 ບັດນີ້ຈຸດປະສົງຂອງພວກທະນາຍ ຄວາມເຫລົ່ານີ້ຄື ເພື່ອຫາຜົນປະໂຫຍດ; ແລະ ພວກເຂົາໄດ້ຮັບຜົນປະໂຫຍດຕາມ ວຽກງານຂອງພວກເຂົາ.

23 ຂ ແອວ 34:32–35.
25 ກ 2 ກຣທ 4:4;
ແອວ 14:6.
27 ກ ລກ 11:45–52.
28 ກ ແອວ 14:2.
31 ກ ແອວ 11:20–36.

## ບົດທີ 11

*ເງິນຫລຽນ ແລະ ການວັດແທກຂອງຊາວນີໄຟຖືກກຳນົດຂຶ້ນ—ແອມ ມິວເລັກ ໄດ້ໂຕ້ຖຽງກັບຊີເອສຣອມ—ພຣະຄຣິດຈະບໍ່ຊ່ວຍຄົນໃຫ້ລອດໃນບາບຂອງເຂົາ—ມີພຽງແຕ່ຜູ້ທີ່ໄດ້ຮັບອານາຈັກສະຫວັນເປັນມູນມໍລະດົກເທົ່ານັ້ນທີ່ຈະລອດ—ມະນຸດທຸກຄົນຈະລຸກຂຶ້ນໃນຄວາມອະມະຕະ—ຈະບໍ່ມີຄວາມຕາຍຫລັງຈາກການຟື້ນຄືນຊີວິດ. ປະມານ 82 ປີ ກ່ອນ ຄ.ສ.*

1 ບັດນີ້ມີຢູ່ໃນກົດໝາຍຂອງໂມໄຊຢາວ່າ ທຸກຄົນທີ່ເປັນຜູ້ຕັດສິນກົດໝາຍ ຫລືຜູ້ໃດທີ່ໄດ້ຮັບແຕ່ງຕັ້ງໃຫ້ເປັນຜູ້ຕັດສິນຈະໄດ້ຮັບຄ່າຈ້າງຕາມເວລາທີ່ຜູ້ນັ້ນໃຊ້ຕັດສິນຄົນທີ່ຖືກນຳມາຢູ່ຕໍ່ໜ້າເຂົາເຈົ້າເພື່ອຮັບການຕັດສິນ.

2 ບັດນີ້ຖ້າຫາກຜູ້ໃດເປັນໜີ້ຜູ້ອື່ນ ແລະລາວບໍ່ຍອມຈ່າຍເງິນທີ່ເປັນໜີ້ນັ້ນ, ເມື່ອເຈົ້າໜີ້ຟ້ອງຕໍ່ຜູ້ຕັດສິນ; ແລະ ຜູ້ຕັດສິນຍ່ອມປະຕິບັດໄປຕາມສິດອຳນາດ, ແລະສົ່ງເຈົ້າໜ້າທີ່ອອກໄປເອົາຕົວຜູ້ນັ້ນມາຢູ່ຕໍ່ໜ້າເພິ່ນ; ແລະ ຜູ້ຕັດສິນຈະຕັດສິນຄົນນັ້ນຕາມກົດໝາຍ ແລະ ຕາມຫລັກຖານພະຍານທີ່ນຳມາຟ້ອງຜູ້ນັ້ນ, ແລະ ຜູ້ນັ້ນຍ່ອມຖືກບັງຄັບໃຫ້ຈ່າຍສິ່ງທີ່ເປັນໜີ້ຕາມນັ້ນ, ຫລື ຖືກຍຶດຊັບສິນທັງໝົດ, ຫລື ຖືກຂັບໄລ່ອອກຈາກບັນດາຜູ້ຄົນເໝືອນດັ່ງຄົນຂະໂມຍ ແລະ ໂຈນ.

3 ແລະ ຜູ້ຕັດສິນຈະໄດ້ຮັບຄ່າຈ້າງຂອງຕົນຕາມເວລາ ແລະ ວຽກງານຂອງຕົນ—ຊຶ່ງເປັນຄຳໜຶ່ງຊີໄນສຳລັບມື້ໜຶ່ງ, ຫລື ເປັນເງິນໜຶ່ງຊີນຳ, ຊຶ່ງເທົ່າກັບຄຳໜຶ່ງຊີໄນ; ແລະ ນີ້ເປັນໄປຕາມກົດທີ່ມີໃຫ້ໄວ້.

4 ບັດນີ້ ນີ້ເປັນຊື່ຄຳ ແລະ ເງິນຊິ້ນຕ່າງໆຂອງພວກເຂົາຕາມຄຸນຄ່າຂອງມັນ. ແລະຊື່ເຫລົ່ານີ້ແມ່ນຊາວນີໄຟໃຫ້ໄວ້, ເພາະພວກເຂົາບໍ່ໄດ້ຄິດຄ່າຕາມວິທີຂອງຊາວຢິວທີ່ຢູ່ໃນເຢຣູຊາເລັມ ທັງພວກເຂົາບໍ່ໄດ້ວັດແທກຕາມວິທີຂອງຊາວຢິວ; ແຕ່ພວກເຂົາປ່ຽນວິທີຄິດຄ່າ ແລະ ວັດແທກຂອງພວກເຂົາ, ຕາມຄວາມນຶກຄິດ ແລະສະພາບຂອງຜູ້ຄົນໃນທຸກລຸ້ນຄົນ, ຈົນເຖິງການປົກຄອງຂອງຜູ້ຕັດສິນ, ແລະ ສິ່ງຕໍ່ໄປນີ້ໄດ້ຖືກ [a]ສະຖາປະນາຂຶ້ນໂດຍກະສັດໂມໄຊຢາ.

5 ບັດນີ້ວິທີຄິດຄ່າເປັນດັ່ງນີ້—ຄຳໜຶ່ງຊີໄນ, ຄຳໜຶ່ງຊີອັນ, ຄຳໜຶ່ງຊຳ, ແລະ ຄຳໜຶ່ງລິມນາ.

6 ເງິນໜຶ່ງຊີນຳ, ເງິນໜຶ່ງອາມນໍ, ເງິນໜຶ່ງເອຊະຣອມ, ແລະ ເງິນໜຶ່ງອອນໄທ.

7 ເງິນໜຶ່ງຊີນຳເທົ່າກັບຄຳໜຶ່ງຊີໄນ, ແລະ ທັງມີຄ່າເທົ່າກັບເຂົ້າບາເລໜຶ່ງສ່ວນ, ແລະ ມີຄ່າເທົ່າກັບເມັດພືດທຸກຊະນິດໜຶ່ງສ່ວນຄືກັນ.

8 ບັດນີ້ຄຳໜຶ່ງຊີອັນ ມີຄ່າເທົ່າກັບຄຳຊີໄນສອງເທົ່າ.

9 ແລະ ຄຳໜຶ່ງຊຳ ມີຄ່າເທົ່າກັບຄຳຊີອັນສອງເທົ່າ.

10 ແລະ ຄຳໜຶ່ງລິມນາ ມີຄ່າເທົ່າກັບຄຳທັງໝົດນັ້ນ.

11 ແລະ ເງິນໜຶ່ງອາມນໍ ມີຄ່າເທົ່າກັບເງິນຊີນຳສອງເທົ່າ.

12 ແລະ ເງິນໜຶ່ງເອຊະຣອມ ມີຄ່າເທົ່າກັບເງິນຊີນຳສີ່ເທົ່າ.

13 ແລະ ເງິນໜຶ່ງອອນໄທ ມີຄ່າເທົ່າກັບເງິນທັງໝົດນັ້ນ.

14 ບັດນີ້ ນີ້ຄືຄຸນຄ່າຈຳນວນນ້ອຍຂອງວິ

**11** 4 *ກ* ມຊຢ 29:40–44.

ທີການຄິດໄລ່ຂອງພວກເຂົາ—
15 ໜຶ່ງຊີບລັນ ມີຄ່າເທົ່າກັບເຄິ່ງໜຶ່ງ
ຂອງຊີນຳ; ສະນັ້ນ, ເງິນໜຶ່ງຊີບລັນ ຈຶ່ງມີ
ຄ່າເທົ່າກັບເຂົ້າບາເລເຄິ່ງສ່ວນ.
16 ແລະ ໜຶ່ງຊີບລຳ ມີຄ່າເທົ່າກັບເຄິ່ງ
ໜຶ່ງຂອງເງິນຊີບລັນ.
17 ແລະ ໜຶ່ງເລອາ ມີຄ່າເທົ່າກັບເຄິ່ງໜຶ່ງ
ຂອງເງິນຊີບລຳ.
18 ບັດນີ້ ນີ້ຄືຈຳນວນຕາມວິທີຄິດໄລ່
ຂອງພວກເຂົາ.
19 ບັດນີ້ຄຳໜຶ່ງອານທຽນ ມີຄ່າເທົ່າກັບ
ເງິນຊີບລັນສາມເທົ່າ.
20 ບັດນີ້, ມັນເປັນໄປເພື່ອຈຸດປະສົງ
ຢ່າງດຽວທີ່ຈະຫາຜົນປະໂຫຍດ, ເພາະວ່າ
ພວກເຂົາໄດ້ຮັບຄ່າຈ້າງຕາມວຽກງານຂອງ
ພວກເຂົາ, ສະນັ້ນ, ພວກເຂົາໄດ້ຍຸຍົງໃຫ້
ຜູ້ຄົນກໍ່ຄວາມວຸ້ນວາຍ ແລະ ຄວາມຫຍຸ້ງ
ຍາກ ແລະ ຄວາມຊົ່ວຮ້າຍນາໆປະການ
ເພື່ອພວກເຂົາຈະໄດ້ມີວຽກເຮັດຫລາຍຂຶ້ນ
ເພື່ອພວກເຂົາຈະ [ກ]ໄດ້ຮັບເງິນຕາມຄະດີທີ່
ຖືກນຳມາໃຫ້ພວກເຂົາ; ດັ່ງນັ້ນ ພວກເຂົາ
ຈຶ່ງໄດ້ຍຸຍົງໃຫ້ຜູ້ຄົນຕໍ່ຕ້ານແອວມາ ແລະ
ແອມມິວເລັກ.
21 ແລະ ຊີເອສຣອມຜູ້ນີ້ຕັ້ງຕົ້ນຊັກຖາມ
ແອມມິວເລັກ, ມີຄວາມວ່າ: ທ່ານຈະຕອບ
ຄຳຖາມຂອງຂ້າພະເຈົ້າຈັກສອງສາມຄຳ
ທີ່ຂ້າພະເຈົ້າຈະຖາມທ່ານໄດ້ບໍ? ບັດນີ້
ຊີເອສຣອມເປັນຄົນທີ່ຊຳນານໃນ [ກ]ເລ່ກົນ
ຂອງມານ, ເພື່ອລາວຈະໄດ້ທຳລາຍສິ່ງທີ່
ດີ; ສະນັ້ນ, ລາວຈຶ່ງກ່າວກັບແອມມິວເລັກ
ວ່າ: ທ່ານຈະຕອບຄຳຖາມທີ່ຂ້າພະເຈົ້າຈະ
ຖາມທ່ານໄດ້ບໍ?
22 ແລະ ແອມມິວເລັກກ່າວກັບລາວວ່າ:
ຕອບໄດ້, ຖ້າຫາກມັນເປັນໄປຕາມ [ກ]ພຣະ
ວິນຍານຂອງພຣະຜູ້ເປັນເຈົ້າ, ຊຶ່ງຢູ່ໃນຂ້າ
ພະເຈົ້າ; ເພາະຂ້າພະເຈົ້າຈະບໍ່ເວົ້າຫຍັງ
ຊຶ່ງເປັນຄວາມກົງກັນຂ້າມກັບພຣະວິນ
ຍານຂອງພຣະຜູ້ເປັນເຈົ້າ. ແລະ ຊີເອສ
ຣອມກ່າວກັບລາວວ່າ: ຈົ່ງເບິ່ງ, ນີ້ແມ່ນເງິນ
ຫົກອອນໄທ ແລະ ທັງໝົດນີ້ ຂ້າພະເຈົ້າຈະ
ມອບໃຫ້ທ່ານຖ້າຫາກທ່ານຈະປະຕິເສດ
ການເປັນຢູ່ຂອງພຣະຜູ້ສູງສຸດ.
23 ແລະ ແອມມິວເລັກກ່າວວ່າ: ໂອ້ ເຈົ້າ
[ກ]ຜູ້ເປັນລູກຂອງນະລົກເອີຍ, ເປັນດ້ວຍ
ເຫດໃດເຈົ້າຈຶ່ງຈະມາ [ຂ]ລໍ້ລວງຂ້າພະເຈົ້າ?
ເຈົ້າຮູ້ບໍວ່າຄົນຊອບທຳບໍ່ຜ່າຍແພ້ຕໍ່ການລໍ້
ລວງເຊັ່ນນັ້ນດອກ?
24 ເຈົ້າເຊື່ອບໍວ່າບໍ່ມີພຣະເຈົ້າ? ຂ້າພະ
ເຈົ້າກ່າວກັບເຈົ້າວ່າ, ບໍ່ເລີຍ, ເຈົ້າຮູ້ວ່າມີ
ພຣະເຈົ້າ, ແຕ່ເຈົ້າຮັກ [ກ]ຊັບສິນນັ້ນຫລາຍ
ກວ່າພຣະອົງ.
25 ແລະ ບັດນີ້ເຈົ້າເວົ້າຕົວະເຮົາຢູ່ຕໍ່ໜ້າ
ພຣະເຈົ້າ. ເຈົ້າກ່າວກັບຂ້າພະເຈົ້າວ່າ—
ຈົ່ງເບິ່ງ ຫົກອອນໄທນີ້ ຊຶ່ງມີຄ່າຫລາຍ ຂ້າ
ພະເຈົ້າຈະມອບໃຫ້ແກ່ທ່ານ—ເມື່ອເຈົ້າ
ມີຄວາມຕັ້ງໃຈທີ່ຈະບໍ່ໃຫ້ຂ້າພະເຈົ້າ ແຕ່
ຄວາມປາດຖະໜາຂອງເຈົ້າຄືພຽງແຕ່ໃຫ້
ຂ້າພະເຈົ້າປະຕິເສດພຣະເຈົ້າອົງທ່ຽງແທ້,
ແລະ ຊົງພຣະຊົນຢູ່ ເພື່ອເຈົ້າຈະໄດ້ມີເຫດ
ຜົນທີ່ຈະທຳລາຍຂ້າພະເຈົ້າ. ແລະ ບັດນີ້
ຈົ່ງເບິ່ງ, ເພາະຄວາມຊົ່ວອັນໃຫຍ່ຫລວງນີ້
ເຈົ້າຈະໄດ້ຮັບຜົນຕອບແທນ.
26 ແລະ ຊີເອສຣອມຖາມແອມມິວເລັກ
ອີກວ່າ: ທ່ານກ່າວວ່າມີພຣະເຈົ້າອົງທ່ຽງ
ແທ້ ແລະ ຊົງພຣະຊົນຢູ່ແມ່ນບໍ?
27 ແລະ ແອມມິວເລັກຕອບວ່າ: ແມ່ນ

20 *ກ* ແອວ 10:32.
21 *ກ* ແອວ 10:13.
22 *ກ* ຄມພ ພຣະວິນ
ຍານບໍລິສຸດ.
23 *ກ* ແອວ 5:41.
*ຂ* ຄມພ ລໍ້ລວງ, ການລໍ້ລວງ.
24 *ກ* 1 ຕມທ 6:10;
ຕຕ 1:11.

ແລ້ວ, ມີພຣະເຈົ້າອົງທ່ຽງແທ້ ແລະ ຊົງພຣະ
ຊົນຢູ່.
28 ບັດ ນີ້ ຊີເອສ ຣອມ ຖາມ ວ່າ: ມີ ພຣະ
ເຈົ້າຫລາຍກວ່າອົງໜຶ່ງບໍ?
29 ແລະ ແອມມິວເລັກຕອບວ່າ, ບໍ່.
30 ບັດນີ້ຊີເອສຣອມຖາມແອມມິວເລັກ
ອີກວ່າ: ທ່ານຮູ້ເລື່ອງເຫລົ່ານີ້ໄດ້ແນວໃດ?
31 ແລະ ລາວຕອບວ່າ: [ກ]ທູດອົງໜຶ່ງເຮັດ
ໃຫ້ຂ້າພະເຈົ້າຮູ້ເຖິງເລື່ອງນີ້.
32 ແລະ ຊີເອສຣອມຖາມອີກວ່າ: ຜູ້ທີ່ຈະ
ມານັ້ນແມ່ນໃຜ? ພຣະບຸດຂອງພຣະເຈົ້າບໍ?
33 ແລະ ລາວຕອບຊີເອສຣອມວ່າ, ແມ່ນ
ແລ້ວ.
34 ແລະ ຊີເອສຣອມຖາມອີກວ່າ: ພຣະ
ອົງ ຈະ ຊ່ວຍ ຜູ້ ຄົນ ຂອງ ພຣະ ອົງ ໃຫ້ ລອດ
[ກ]ໃນບາບຂອງເຂົາບໍ? ແລະ ແອມມິວເລັກ
ຕອບ ແລະ ກ່າວກັບລາວວ່າ: ຂ້າພະເຈົ້າ
ກ່າວກັບເຈົ້າວ່າ ພຣະອົງຈະບໍ່ກະທຳເຊັ່ນ
ນັ້ນ, ເພາະເປັນໄປບໍ່ໄດ້ທີ່ພຣະອົງຈະປະຕິ
ເສດພຣະຄຳຂອງພຣະອົງ.
35 ບັດ ນີ້ ຊີເອສ ຣອມ ກ່າວ ກັບ ຜູ້ ຄົນ
ວ່າ: ໃຫ້ ພວກ ເຈົ້າ ຈົດ ຈຳ ເລື່ອງ ເຫລົ່ານີ້
ໄວ້; ເພາະລາວເວົ້າວ່າ ມີພຣະເຈົ້າພຽງອົງ
ດຽວ; ເຖິງຢ່າງໃດກໍຕາມ, ລາວຍັງກ່າວວ່າ
ພຣະບຸດຂອງພຣະເຈົ້າຈະສະເດັດມາ, ແຕ່
ພຣະອົງຈະບໍ່ຊ່ວຍຜູ້ຄົນຂອງພຣະອົງໃຫ້
ລອດ—ຄືກັນກັບວ່າລາວມີສິດອຳນາດບັນ
ຊາພຣະເຈົ້າ.
36 ບັດນີ້ແອມມິວເລັກກ່າວກັບລາວອີກ
ວ່າ: ຈົ່ງເບິ່ງ ເຈົ້າເວົ້າຕົວະ, ເພາະເຈົ້າກ່າວ
ວ່າຂ້າພະເຈົ້າເວົ້າຄືກັນກັບວ່າ ຂ້າພະເຈົ້າ
ມີສິດອຳນາດບັນຊາພຣະເຈົ້າ ເພາະຂ້າພະ
ເຈົ້າກ່າວວ່າ ພຣະອົງຈະບໍ່ຊ່ວຍຜູ້ຄົນຂອງ
ພຣະອົງໃຫ້ລອດໃນບາບຂອງພວກເຂົາ.
37 ແລະ ຂ້າພະເຈົ້າກ່າວກັບເຈົ້າອີກວ່າ
ພຣະອົງບໍ່ສາມາດຊ່ວຍເຂົາໃຫ້ລອດໃນ
[ກ]ບາບພວກເຂົາໄດ້; ເພາະຂ້າພະເຈົ້າປະ
ຕິເສດພຣະຄຳຂອງພຣະອົງບໍ່ໄດ້, ແລະ
ພຣະອົງໄດ້ກ່າວໄວ້ວ່າ [ຂ]ສິ່ງທີ່ບໍ່ສະອາດ
ຈະບໍ່ໄດ້ຮັບ [ຄ]ອານາຈັກສະຫວັນເປັນມູນ
ມໍລະດົກໄດ້ເລີຍ; ສະນັ້ນ, ເຈົ້າຈະລອດ
ໄດ້ແນວໃດເວັ້ນເສຍແຕ່ເຈົ້າຈະໄດ້ຮັບອາ
ນາຈັກສະຫວັນເປັນມູນມໍລະດົກ? ສະນັ້ນ,
ເຈົ້າຈະລອດບໍ່ໄດ້ໃນບາບຂອງເຈົ້າ.
38 ບັດນີ້ຊີເອສຣອມຖາມແອມມິວເລັກ
ອີກວ່າ: ພຣະບຸດຂອງພຣະເຈົ້າຄືພຣະ
ບິດາຜູ້ສະຖິດນິລັນດອນບໍ?
39 ແລະ ແອມມິວເລັກຕອບລາວວ່າ:
ແທ້ຈິງແລ້ວ, ພຣະອົງຄື [ກ]ພຣະບິດາຜູ້ສະ
ຖິດນິລັນດອນຂອງສະຫວັນ ແລະ ແຜ່ນ
ດິນໂລກ, ແລະ [ຂ]ທຸກສິ່ງທີ່ຢູ່ໃນນັ້ນ; ພຣະ
ອົງເປັນຕົ້ນ ແລະ ທີ່ສຸດ, ເປັນຜູ້ທຳອິດ
ແລະ ເປັນຜູ້ສຸດທ້າຍ;
40 ແລະ ພຣະອົງຈະສະເດັດມາໃນ
[ກ]ໂລກນີ້ເພື່ອ [ຂ]ໄຖ່ຜູ້ຄົນຂອງພຣະອົງ; ແລະ
ພຣະອົງຈະ [ຄ]ຮັບເອົາການລ່ວງລະເມີດ
ຂອງຄົນເຫລົ່ານັ້ນ ຜູ້ທີ່ເຊື່ອໃນພຣະນາມ
ຂອງພຣະອົງ; ແລະ ຄົນເຫລົ່ານັ້ນຄືຜູ້ທີ່ຈະ
ມີຊີວິດນິລັນດອນ, ແລະ ຄວາມລອດຈະບໍ່
ມາຫາໃຜອີກເລີຍ.

---

31 *ກ* ແອວ 10:7–10.
34 *ກ* ຣລມ 5:10–11.
37 *ກ* 1 ກຣທ 6:9–10.
*ຂ* 1 ນຟ 15:33; ແອວ 40:26; 3 ນຟ 27:19. ຄນພ ຄົນອະທຳ.
*ຄ* ຄນພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
39 *ກ* ອຊຢ 9:6.
*ຂ* ກລຊ 1:16; ມຊຢ 4:2.
40 *ກ* ຄນພ ໂລກ.
*ຂ* ຣມ 11:26–27.
*ຄ* ອພຍ 34:6–7; ອຊຢ 53:5; 1 ຢຮ 2:2; ມຊຢ 14:5; 15:12; ຄພ 19:16–19.

41 ສະນັ້ນ ຄົນຊົ່ວ ຈຶ່ງ ຄົງ ຢູ່ ເໝືອນ ກັບ
ວ່າ [ກ]ບໍ່ມີການໄຖ່ເກີດຂຶ້ນ ເລີຍ, ເວັ້ນເສຍ
ແຕ່ຈະ ເປັນການ ແກ້ສາຍຮັດ ແຫ່ງ ຄວາມ
ຕາຍອອກ; ເພາະຈົ່ງເບິ່ງ, ມື້ນັ້ນຈະມາເຖິງ
ທີ່ [ຂ]ຄົນທັງປວງຈະລຸກຂຶ້ນຈາກຄວາມຕາຍ
ແລະ ຢືນຢູ່ຕໍ່ພຣະພັກຂອງພຣະເຈົ້າ, ແລະ
ຖືກ [ຄ]ພິພາກສາຕາມວຽກງານຂອງພວກ
ເຂົາ.
42 ບັດນີ້, ຄວາມຕາຍ ຢ່າງໜຶ່ງຊຶ່ງ ເອີ້ນ
ວ່າ ຄວາມ ຕາຍ ທາງ ໂລກ; ແລະ ຄວາມ
ຕາຍ ຂອງພຣະຄຣິດ ຈະ ແກ້ [ກ]ສາຍ ຮັດ
ແຫ່ງຄວາມຕາຍທາງໂລກນີ້ ເພື່ອຈະຍົກ
ຄົນທັງປວງຂຶ້ນຈາກຄວາມຕາຍທາງໂລກ
ນີ້.
43 ວິນຍານກັບຮ່າງກາຍຈະ [ກ]ຮ່ວມເຂົ້າ
ກັນອີກໃນຮູບລັກສະນະອັນສົມບູນຂອງ
ມັນ; ທັງແຂນຂາ ແລະ ຂໍ້ຕໍ່ຈະກັບຄືນສູ່
ໂຄງຮ່າງອັນຖືກຕ້ອງຂອງມັນ, ເໝືອນດັ່ງ
ທີ່ພວກເຮົາເປັນຢູ່ໃນເວລານີ້; ແລະ ພວກ
ເຮົາຈະຖືກນຳມາຢືນຢູ່ຕໍ່ພຣະພັກຂອງ
ພຣະເຈົ້າ, ໂດຍຮູ້ຈັກຄືກັບທີ່ພວກເຮົາຮູ້
ຢູ່ໃນເວລານີ້, ແລະ ຈະມີ [ຂ]ການຈື່ຈຳເຖິງ
[ຄ]ຄວາມຜິດທັງໝົດຂອງພວກເຮົາໄດ້ຢ່າງ
ແຈ່ມແຈ້ງ.
44 ບັດນີ້, ການກັບຄືນມານີ້ຈະເກີດກັບ
ຄົນທັງປວງ, ທັງແກ່ ແລະ ໜຸ່ມ, ທັງຂ້າທາດ
ແລະ ຜູ້ເປັນອິດສະລະ, ທັງຊາຍ ແລະ ຍິງ,
ທັງຄົນຊົ່ວ ແລະ ຄົນຊອບທຳ; ແລະ ເຖິງ
ແມ່ນຜົມໃນຫົວຂອງພວກເຂົາ ເສັ້ນໜຶ່ງກໍ
ຈະບໍ່ເສຍໄປ; ແຕ່ທຸກຢ່າງຈະ [ກ]ກັບຄືນສູ່
ໂຄງຮ່າງອັນສົມບູນຂອງມັນດັ່ງທີ່ເປັນຢູ່
ໃນເວລານີ້, ຫລື ໃນຮ່າງກາຍ, ແລະ ຈະ
ຖືກນຳມາພິຈາລະນາຢູ່ຕໍ່ໜ້າບ່ອນພິພາກ
ສາຂອງພຣະຄຣິດອົງເປັນພຣະບຸດ, ແລະ
ພຣະເຈົ້າອົງເປັນ [ຂ]ພຣະບິດາ ແລະ ພຣະ
ວິນຍານສັກສິດ, ຊຶ່ງເປັນ [ຄ]ພຣະເຈົ້າອົງ
ດຽວຜູ້ສະຖິດນິລັນດອນ ເພື່ອຮັບ [ງ]ການພິ
ພາກສາຕາມວຽກງານຂອງພວກເຂົາ, ບໍ່
ວ່າພວກເຂົາຈະດີ ຫລື ຈະຊົ່ວ.
45 ບັດນີ້, ຈົ່ງເບິ່ງ, ຂ້າພະເຈົ້າໄດ້ເວົ້າ
ກັບເຈົ້າແລ້ວກ່ຽວກັບຄວາມຕາຍຂອງ
ຮ່າງກາຍທີ່ເປັນມະຕະ, ແລະ ກ່ຽວກັບ
[ກ]ການຟື້ນຄືນຊີວິດຂອງຮ່າງກາຍທີ່ເປັນ
ມະຕະ. ຂ້າພະເຈົ້າກ່າວກັບເຈົ້າວ່າ ຮ່າງ
ກາຍທີ່ເປັນມະຕະນີ້ຈະຖືກ [ຂ]ຍົກຂຶ້ນເປັນ
ຮ່າງກາຍທີ່ເປັນ [ຄ]ອະມະຕະຄືຈາກຄວາມ
ຕາຍ, ເຖິງແມ່ນຄວາມຕາຍຄັ້ງທຳອິດມາສູ່
ຊີວິດ, ຄືພວກເຂົາຈະ [ງ]ຕາຍບໍ່ໄດ້ອີກຕໍ່ໄປ;
ວິນຍານຂອງພວກເຂົາຮ່ວມເຂົ້າກັບຮ່າງ
ກາຍຂອງພວກເຂົາ, ແລະ ຈະບໍ່ຖືກແຍກ
ອອກຈາກກັນອີກເລີຍ; ທັງໝົດຈະກັບເປັນ
[ຈ]ທາງວິນຍານ ແລະ ອະມະຕະດັ່ງນີ້, ຊຶ່ງ
ພວກເຂົາຈະບໍ່ເຫັນຄວາມເນົ່າເປື່ອຍອີກຕໍ່
ໄປ.
46 ບັດນີ້ເມື່ອແອມມິວເລັກຈົບຂໍ້ຄວາມນີ້
ແລ້ວ ຜູ້ຄົນເລີ່ມແປກໃຈອີກ, ແລະ ຊີເອສ

---

41 *ກ* ແອວ 12:18; ຄພ 88:33.
*ຂ* ພນມ 20:12–13; ແອວ 42:23.
*ຄ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
42 *ກ* ແອວ 12:16.
43 *ກ* 2 ນຟ 9:13; ແອວ 40:23.
*ຂ* 2 ນຟ 9:14; ມຊຢ 3:25; ແອວ 5:18.
*ຄ* ຄມພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
44 *ກ* ແອວ 41:12–15.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ຄ* 3 ນຟ 11:27, 36. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ງ* ພນມ 20:12–13.
45 *ກ* ແອວ 40:23; ຄພ 88:16.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຄ* ຄມພ ອະມະຕະ, ຄວາມເປັນອະມະຕະ.
*ງ* ພນມ 21:4; ຄພ 63:49; 88:116.
*ຈ* 1 ກຣທ 15:44.

ຣອມເລີ່ມສັ່ນສາຍ. ແລະ ຄຳເວົ້າຂອງແອມ
ມິວເລັກໄດ້ຈົບລົງດັ່ງນີ້, ຫລື ຂ້າພະເຈົ້າໄດ້
ຂຽນໄວ້ເທົ່ານີ້.

## ບົດທີ 12

*ແອວມາກ່າວກັບຊີເອສຣອມ—ຄວາມລຶກ
ລັບຂອງພຣະເຈົ້າຈະຖືກມອບໃຫ້ແກ່ຜູ້ທີ່
ຊື່ສັດເທົ່ານັ້ນ—ມະນຸດຖືກຕັດສິນດ້ວຍ
ຄວາມຄິດ, ຄວາມເຊື່ອຖື, ຄຳເວົ້າ, ແລະ
ວຽກງານຂອງຕົນ—ຄົນຊົ່ວຈະໄດ້ຮັບທຸກ
ທໍລະມານໂດຍຄວາມຕາຍທາງວິນຍານ—
ຊີວິດທີ່ເປັນມະຕະນີ້ເປັນສະພາວະແຫ່ງ
ການທົດລອງ—ແຜນແຫ່ງການໄຖ່ເຮັດໃຫ້
ການຟື້ນຄືນຊີວິດເກີດຂຶ້ນ ແລະ, ຜ່ານທາງ
ສັດທາ, ພາໃຫ້ການປົດບາບເກີດຂຶ້ນ—
ຄົນທີ່ກັບໃຈຈະໄດ້ຮັບຄວາມເມດຕາຜ່ານ
ພຣະບຸດອົງດຽວທີ່ຖືກຳເນີດ. ປະມານ 82
ປີ ກ່ອນ ຄ.ສ.*

1 ບັດນີ້ແອວມາ, ໂດຍທີ່ເຫັນວ່າຄຳເວົ້າ
ຂອງແອມມິວເລັກເຮັດໃຫ້ຊີເອສຣອມງຽບ
ລົງ, ເພາະລາວເຫັນວ່າ ແອມມິວເລັກຈັບ
ລາວໄດ້ໃນ [ກ]ການເວົ້າຕົວະ ແລະ ການ
ຫລອກລວງ ເພື່ອພະຍາຍາມຈະທຳລາຍ
ລາວ, ແລະ ເຫັນວ່າ ລາວເລີ່ມສັ່ນສາຍ
ດ້ວຍ [ຂ]ຄວາມຮູ້ຕົວໃນຄວາມຜິດຂອງລາວ
ເອງ, ເພິ່ນຈຶ່ງເປີດປາກ, ແລະ ເລີ່ມເວົ້າ
ກັບລາວ ເພື່ອເຮັດໃຫ້ຄຳເວົ້າຂອງແອມ
ມິວເລັກມີຫລັກຖານ, ແລະ ອະທິບາຍສິ່ງ
ຕ່າງໆ, ຫລື ກ່າວເຖິງພຣະຄຳພີ ຊຶ່ງນອກ
ເໜືອໄປຈາກທີ່ແອມມິວເລັກໄດ້ກ່າວໄປ.
2 ບັດນີ້ຄຳທີ່ແອວມາເວົ້າກັບຊີເອສຣອມ
ເຮັດໃຫ້ຜູ້ຢູ່ຮອບໆນັ້ນໄດ້ຍິນອີກ; ເພາະຝູງ
ຊົນມີຫລາຍ ແລະ ເພິ່ນໄດ້ເວົ້າໄວ້ຕາມນີ້:
3 ບັດນີ້ຊີເອສຣອມ, ໂດຍທີ່ເຫັນວ່າເຈົ້າ
ຖືກຈັບໄດ້ໃນການເວົ້າຕົວະ ແລະ ການ
ໃຊ້ກົນອຸບາຍ, ບໍ່ແມ່ນແຕ່ກັບມະນຸດເທົ່າ
ນັ້ນ ແຕ່ເຈົ້າຍັງເວົ້າຕົວະພຣະເຈົ້ານຳອີກ;
ເພາະຈົ່ງເບິ່ງ, ພຣະອົງຮູ້ [ກ]ຄວາມຄິດທັງ
ໝົດຂອງເຈົ້າ, ແລະ ເຈົ້າເຫັນວ່າຄວາມ
ຄິດຂອງເຈົ້າເປັນທີ່ຮູ້ຈັກແກ່ພວກເຮົາໂດຍ
ພຣະວິນຍານຂອງພຣະອົງ;
4 ແລະ ເຈົ້າເຫັນວ່າ ພວກເຮົາຮູ້ແຜນ
ຂອງເຈົ້າເປັນແຜນທີ່ມີເລ່ຫລ່ຽມຫລາຍ,
ຊຶ່ງເປັນເລ່ຫລ່ຽມຂອງມານ, ເພື່ອເວົ້າຕົວະ
ແລະ ຫລອກລວງຜູ້ຄົນພວກນີ້ເພື່ອເຈົ້າຈະ
ໄດ້ເຮັດໃຫ້ພວກເຂົາຕໍ່ຕ້ານພວກເຮົາ ໝິ່ນ
ປະໝາດພວກເຮົາ ແລະ ຂັບໄລ່ພວກເຮົາ
ອອກໄປ—
5 ບັດນີ້ມັນເປັນແຜນຂອງ [ກ]ຜູ້ປໍລະປັກ
ຂອງເຈົ້າ, ແລະ ມັນໄດ້ໃຊ້ອຳນາດຂອງມັນ
ກັບເຈົ້າແລ້ວ. ບັດນີ້ຂ້າພະເຈົ້າຢາກໃຫ້ເຈົ້າ
ຈຳໄວ້ວ່າ ອັນໃດທີ່ຂ້າພະເຈົ້າເວົ້າກັບເຈົ້າ
ກໍເໝືອນກັບວ່າຂ້າພະເຈົ້າກ່າວກັບໝົດ
ທຸກຄົນ.
6 ແລະ ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທຸກ
ຄົນວ່າ ນີ້ເປັນບ້ວງຂອງຜູ້ປໍລະປັກ, ຊຶ່ງວາງ
ໄວ້ເພື່ອຫວັງຈະຈັບຜູ້ຄົນພວກນີ້ ເພື່ອມັນ
ຈະໄດ້ເອົາພວກເຈົ້າມາຂຶ້ນຢູ່ກັບມັນ, ເພື່ອ
ມັນຈະໄດ້ລ້ອມພວກເຈົ້າໄວ້ໃຫ້ຮອບດ້ວຍ
[ກ]ສາຍໂສ້ຂອງມັນ ເພື່ອມັນຈະໄດ້ຜູກມັດ
ພວກເຈົ້າລົງໄປຫາຄວາມພິນາດອັນເປັນ
ນິດ, ຕາມອຳນາດແຫ່ງການເປັນຊະເລີຍ
ຂອງມັນ.
7 ບັດ ນີ້ ເມື່ອ ແອວມາ ເວົ້າ ຂໍ້ ຄວາມ ນີ້
ແລ້ວ, ຊີເອສຣອມເລີ່ມສັ່ນສະທ້ານຢ່າງ

**12** 1*ກ* ແອວ 11:20–38.
*ຂ* ຄມພ ສຳນຶກ,
ຄວາມສຳນຶກ.
3*ກ* ຢຄ 2:5;
ແອວ 10:17;
ຄພ 6:16.
5*ກ* ຄມພ ມານ.
6*ກ* ແອວ 5:7–10.

ຍິ່ງ, ເພາະລາວຍອມຮັບໃນອຳນາດຂອງ
ພຣະເຈົ້າຫລາຍຂຶ້ນ; ແລະ ລາວຍອມຮັບ
ອີກວ່າ, ແອວມາກັບແອມມິວເລັກມີຄວາມ
ຮູ້ກ່ຽວກັບຕົວລາວ, ເພາະລາວຍອມຮັບວ່າ
ພວກເພິ່ນຮູ້ເຖິງຄວາມນຶກຄິດ ແລະ ຄວາມ
ເຈດຕະນາຂອງໃຈລາວ; ເພາະວ່າເພິ່ນທັງ
ສອງໄດ້ຮັບອຳນາດທີ່ຈະໄດ້ຮູ້ເລື່ອງເຫລົ່າ
ນີ້ຕາມວິນຍານແຫ່ງການທຳນາຍ.
8 ແລະ ຊີເອສຣອມເລີ່ມສອບຖາມພວກ
ເພິ່ນຢ່າງພາກພຽນ, ເພື່ອຈະໄດ້ຮູ້ກ່ຽວ
ກັບອານາຈັກຂອງພຣະເຈົ້າຫລາຍຂຶ້ນ.
ແລະ ລາວຖາມແອວມາວ່າ: ເລື່ອງທີ່ແອມ
ມິວເລັກເວົ້າກ່ຽວກັບການຟື້ນຄືນຊີວິດຂອງ
ຄົນຕາຍນັ້ນໝາຍຄວາມວ່າແນວໃດ, ວ່າ
ຄົນທັງປວງຈະລຸກຂຶ້ນຈາກຄວາມຕາຍ,
ທັງຄົນທ່ຽງທຳ ແລະ ຄົນບໍ່ທ່ຽງທຳ, ແລະ
ຈະຖືກນຳມາຢືນຢູ່ຕໍ່ພຣະພັກຂອງພຣະ
ເຈົ້າ ເພື່ອຈະໄດ້ຮັບການພິພາກສາຕາມ
ວຽກງານຂອງພວກເຂົາ?
9 ແລະ ບັດນີ້ແອວມາເລີ່ມຊີ້ແຈງເລື່ອງ
ເຫລົ່ານີ້ແກ່ລາວ, ໂດຍກ່າວວ່າ: ມັນໄດ້
ຖືກມອບໃຫ້ຫລາຍຄົນເພື່ອຈະຮູ້ [ກ]ຄວາມ
ລຶກລັບຂອງພຣະເຈົ້າ; ເຖິງຢ່າງໃດກໍຕາມ
ພວກເຂົາໄດ້ຮັບພຣະບັນຊາຢ່າງເຄັ່ງຄັດ
ວ່າ ບໍ່ໃຫ້ບອກເລົ່ານອກຈາກຕາມພຣະ
ຄຳຕອນທີ່ພຣະອົງປະທານໃຫ້ລູກຫລານ
ມະນຸດ [ຂ]ເທົ່ານັ້ນ, ຕາມຄວາມເອົາໃຈໃສ່
ແລະ ຄວາມພາກພຽນທີ່ພວກເຂົາຖວາຍ
ແດ່ພຣະອົງ.
10 ແລະ ສະນັ້ນ, ຄົນທີ່ຈະເຮັດໃຈ [ກ]ແຂງ
ກະດ້າງຈະໄດ້ຮັບ [ຂ]ສ່ວນໜ້ອຍຂອງພຣະ
ຄຳ; ແລະ ກັບຄົນທີ່ຈະ [ຄ]ບໍ່ເຮັດໃຈແຂງ
ກະດ້າງກໍຈະໄດ້ [ງ]ຮັບສ່ວນໃຫຍ່ຂອງພຣະ
ຄຳ, ຈົນວ່າມັນຖືກມອບໃຫ້ເຂົາເພື່ອຈະໄດ້
ຮູ້ຈັກເຖິງຄວາມລຶກລັບຂອງພຣະເຈົ້າ ຈົນ
ກວ່າເຂົາຈະຮູ້ຢ່າງເຕັມທີ່.
11 ແລະ ກັບພວກທີ່ຈະເຮັດໃຈແຂງກະ
ດ້າງ, ພຣະອົງຈະປະທານ [ກ]ສ່ວນໜ້ອຍ
ຂອງພຣະຄຳໃຫ້ ຈົນວ່າພວກເຂົາ [ຂ]ບໍ່ຮູ້
ອັນໃດກ່ຽວກັບຄວາມລຶກລັບຂອງພຣະ
ອົງ; ແລະ ເມື່ອນັ້ນພວກເຂົາຍ່ອມຖືກມານ
ເອົາໄປເປັນຊະເລີຍ ແລະ ຖືກນຳໄປດ້ວຍ
ຄວາມປະສົງຂອງມັນລົງໄປຫາຄວາມ
ພິນາດ. ບັດນີ້ ນີ້ຄືຄວາມໝາຍຂອງ [ຄ]ສາຍ
ໂສ້ແຫ່ງ [ງ]ນະລົກ.
12 ແລະ ແອມມິວເລັກໄດ້ເວົ້າໄວ້ຢ່າງ
ແຈ່ມແຈ້ງກ່ຽວກັບ [ກ]ຄວາມຕາຍ, ແລະ
ການຖືກຍົກຂຶ້ນຈາກຄວາມເປັນມະຕະນີ້
ໄປຫາສະພາບທີ່ເປັນອະມະຕະ, ແລະ ຖືກ
ນຳໄປຢູ່ຕໍ່ໜ້າບ່ອນພິພາກສາຂອງພຣະ
ເຈົ້າ, ເພື່ອຈະໄດ້ຮັບການ [ຂ]ພິພາກສາຕາມ
ວຽກງານຂອງພວກເຮົາ.
13 ເມື່ອນັ້ນຖ້າຫາກໃຈຂອງພວກເຮົາ
ແຂງກະດ້າງ, ແທ້ຈິງແລ້ວ, ຖ້າຫາກພວກ
ເຮົາເຮັດໃຈແຂງກະດ້າງຕໍ່ພຣະຄຳ, ເຖິງ
ຂະໜາດທີ່ຫາມັນບໍ່ພົບໃນຕົວພວກເຮົາ
ແລ້ວ, ເມື່ອນັ້ນສະພາບຂອງພວກເຮົາຈະ
ເປັນຕາຢ້ານຫລາຍ, ເພາະເມື່ອນັ້ນພວກ

9 ກ ແອວ 26:22.
ຄມພ ຄວາມລຶກລັບ
ຂອງພຣະເຈົ້າ.
ຂ ຢຣ 16:12;
ແອວ 29:8;
3 ນຟ 26:8–11;
ອທ 4:7.
10 ກ 2 ນຟ 28:27; ອທ 4:8.
ຂ ຄພ 93:39.
ຄ ຄມພ ຖ່ອມຕົນ,
ຄວາມຖ່ອມຕົນ.
ງ 2 ນຟ 28:30;
ຄພ 50:24.
11 ກ ມທ 25:29.
ຂ ຄມພ ປະຖິ້ມຄວາມເຊື່ອ,
ການປະຖິ້ມຄວາມເຊື່ອ.
ຄ ຢຣ 8:34;
2 ນຟ 28:19.
ງ ສພສ 9:18;
2 ນຟ 2:29.
ຄມພ ນະລົກ.
12 ກ ແອວ 11:41–45.
ຂ ຄມພ ພິພາກສາ, ການ
ພິພາກສາຄັ້ງສຸດທ້າຍ.

ເຮົາຈະຖືກກ່າວໂທດ.
14 ເພາະ [ກ]ຄຳເວົ້າຂອງພວກເຮົາຈະກ່າວ
ໂທດພວກເຮົາ, ແທ້ຈິງແລ້ວ, ການກະທຳ
ທັງໝົດຂອງພວກເຮົາຈະກ່າວໂທດພວກ
ເຮົາ; ພວກເຮົາຈະບໍ່ພົບພວກເຮົາປາດສະ
ຈາກມົນທິນ; ແລະ ຄວາມນຶກຄິດຂອງພວກ
ເຮົາຈະກ່າວໂທດພວກເຮົານຳອີກ; ແລະ
ໃນສະພາບອັນເປັນຕາຢ້ານນີ້ພວກເຮົາຈະ
ບໍ່ກ້າເງີຍໜ້າເບິ່ງພຣະເຈົ້າຂອງພວກເຮົາ
ໄດ້; ແລະ ພວກເຮົາຄົງຈະຊື່ນຊົມຖ້າຫາກ
ພວກເຮົາສາມາດສັ່ງຫີນ ແລະ [ຂ]ພູເຂົາໃຫ້
ຕົກລົງມາໃສ່ພວກເຮົາ ເພື່ອ [ຄ]ເຊື່ອງພວກ
ເຮົາຈາກທີ່ປະທັບຂອງພຣະອົງ.
15 ແຕ່ນີ້ເປັນໄປບໍ່ໄດ້; ພວກເຮົາຕ້ອງ
ອອກມາຢືນຢູ່ຕໍ່ພຣະພັກຂອງພຣະອົງໃນ
ລັດສະໝີພາບຂອງພຣະອົງ, ແລະ ອຳນາດ
ຂອງພຣະອົງ, ແລະ ໃນລິດເດດຂອງພຣະ
ອົງ, ແລະ ເດຊານຸພາບ, ແລະ ການຄອບ
ຄອງຂອງພຣະອົງ ແລະ ຍອມຮັບດ້ວຍ
ຄວາມ [ກ]ອັບອາຍອັນເປັນນິດວ່າ [ຂ]ການພິ
ພາກສາທັງໝົດຂອງພຣະອົງທ່ຽງທຳ, ວ່າ
ພຣະອົງທ່ຽງທຳໃນວຽກງານທັງໝົດຂອງ
ພຣະອົງ, ແລະ ວ່າພຣະອົງເມດຕາລູກ
ຫລານມະນຸດທຸກຄົນ, ແລະ ວ່າພຣະອົງມີ
ອຳນາດທັງໝົດທີ່ຈະຊ່ອຍທຸກຄົນທີ່ເຊື່ອ
ໃນພຣະນາມຂອງພຣະອົງໃຫ້ລອດ ແລະ
ນຳຜົນທີ່ສົມກັບການກັບໃຈອອກມາ.
16 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບເຈົ້າວ່າ ເມື່ອນັ້ນ [ກ]ຄວາມຕາຍຕ້ອງມາ
ເຖິງ, ເຖິງແມ່ນຄວາມຕາຍເທື່ອທີສອງ ຊຶ່ງ
ເປັນຄວາມຕາຍທາງວິນຍານ; ເມື່ອນັ້ນມັນ
ຈະເປັນເວລາທີ່ຜູ້ໃດກໍຕາມທີ່ຕາຍໃນບາບ
ຂອງຕົນອັນເປັນ [ຂ]ຄວາມຕາຍທາງໂລກຈະ
[ຄ]ຕາຍທາງວິນຍານອີກ; ແທ້ຈິງແລ້ວ, ເຂົາ
ຈະຕາຍໃນເລື່ອງທີ່ກ່ຽວກັບຄວາມຊອບທຳ.
17 ເມື່ອນັ້ນຄືເວລາທີ່ຄວາມທໍລະມານ
ຂອງພວກເຂົາຈະເປັນຄື [ກ]ທະເລໄຟ ແລະ
ມາດ, ຊຶ່ງແປວໄຟນັ້ນລຸກຢູ່ຕະຫລອດໄປ
ແລະ ຕະຫລອດການ; ແລະ ເມື່ອນັ້ນກໍຄື
ເວລາທີ່ພວກເຂົາຖືກລ່າມດ້ວຍສາຍໂສ້
ລົງໄປຫາຄວາມພິນາດອັນເປັນນິດຕາມ
ອຳນາດ ແລະ ການເປັນຊະເລີຍຂອງ
ຊາຕານໂດຍທີ່ມັນເຮັດໃຫ້ພວກນີ້ຂຶ້ນກັບ
ຄວາມປະສົງຂອງມັນ.
18 ເມື່ອນັ້ນ, ຂ້າພະເຈົ້າກ່າວກັບເຈົ້າວ່າ
ພວກເຂົາຈະເປັນຄ້າຍກັບວ່າ [ກ]ບໍ່ມີການ
ໄຖ່ເກີດຂຶ້ນເລີຍ ເພາະພວກເຂົາຈະຖືກໄຖ່
ບໍ່ໄດ້ຕາມຄວາມຍຸດຕິທຳຂອງພຣະເຈົ້າ;
ແລະ ພວກເຂົາຈະ [ຂ]ຕາຍບໍ່ໄດ້, ເພາະວ່າ
ບໍ່ມີການເນົ່າເປື່ອຍຕໍ່ໄປອີກແລ້ວ.
19 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ແອວມາຈົບການເວົ້າຂໍ້ຄວາມນີ້ແລ້ວ, ຜູ້
ຄົນເລີ່ມແປກໃຈຫລາຍຂຶ້ນ;
20 ແຕ່ມີຄົນຜູ້ໜຶ່ງຊື່ອານທິໂອນາ, ຊຶ່ງ
ເປັນຫົວໜ້າຜູ້ປົກຄອງຄົນໜຶ່ງໃນບັນ
ດາພວກເຂົາ, ກ້າວອອກມາ ແລະ ຖາມ
ແອວມາວ່າ: ສິ່ງທີ່ທ່ານກ່າວມານີ້ໝາຍ
ຄວາມວ່າແນວໃດ, ທີ່ວ່າມະນຸດຈະລຸກຂຶ້ນ

14 *ກ* ມທ 12:36; ຢກບ 3:6; ມຊຢ 4:29–30.
*ຂ* ຮສອ 10:8; 2 ນຟ 26:5.
*ຄ* ໂຢບ 34:22; 2 ນຟ 12:10.
15 *ກ* ມຊຢ 3:25.
*ຂ* 2 ປຕ 2:9. ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
16 *ກ* ຄມພ ຄວາມຕາຍທາງວິນຍານ.
*ຂ* ແອວ 11:40–45.
*ຄ* 1 ນຟ 15:33; ແອວ 40:26.
17 *ກ* ພນມ 19:20; 21:8; ມຊຢ 3:27.
18 *ກ* ແອວ 11:41.
*ຂ* ພນມ 21:4; ແອວ 11:45; ຄພ 63:49.

ຈາກ ຄວາມ ຕາຍ ແລະ ຈະ ຖືກ ປ່ຽນ ຈາກ
ສະພາບ ທີ່ ເປັນ ມະຕະ ໄປ ຫາ ສະພາບ ທີ່
ເປັນ [ກ]ອະມະຕະ, ວ່າຈິດວິນຍານຈະຕາຍ
ບໍ່ໄດ້ອີກເລີຍ?
21 ຂໍ້ຄວາມ ພຣະ ຄຳ ພີ ໝາຍ ຄວາມ ວ່າ
ແນວໃດທີ່ກ່າວວ່າ ພຣະເຈົ້າໃຫ້ [ກ]ເຄຣູບິມ
ພ້ອມດ້ວຍດາບທີ່ມີແປວໄຟຍາມຢູ່ທາງຕາ
ເວັນອອກຂອງ [ຂ]ສວນເອເດນ ເພື່ອບໍ່ໃຫ້
ບິດາມານດາຄົນທຳອິດຂອງພວກເຮົາເຂົ້າ
ໄປ ແລະ ຮັບສ່ວນໝາກໄມ້ຂອງຕົ້ນໄມ້
ແຫ່ງຊີວິດ ແລະ ມີຊີວິດຕະຫລອດການ?
ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ບໍ່ມີໂອ
ກາດຈະເປັນໄປໄດ້ເລີຍທີ່ເພິ່ນທັງສອງຈະ
ມີຊີວິດຢູ່ຕະຫລອດການ.
22 ບັດນີ້ແອວມາກ່າວກັບລາວວ່າ: ນີ້ຄື
ເລື່ອງທີ່ຂ້າພະເຈົ້າກຳລັງຈະອະທິບາຍຢູ່.
ບັດນີ້ພວກເຮົາເຫັນວ່າ ອາດາມ [ກ]ຕົກໂດຍ
ການຮັບສ່ວນ [ຂ]ໝາກໄມ້ທີ່ຕ້ອງຫ້າມຕາມ
ພຣະຄຳຂອງພຣະເຈົ້າ; ແລະ ພວກເຮົາ
ຈຶ່ງເຫັນດັ່ງນັ້ນວ່າ ໂດຍການຕົກຂອງເພິ່ນ,
ມະນຸດຊາດທັງປວງຈຶ່ງກັບເປັນຄົນ [ຄ]ຫລົງ
ທາງ ແລະ ຕົກໄປ.
23 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບ ພວກ ເຈົ້າ ວ່າ ຖ້າຫາກເປັນໄປໄດ້ທີ່
ອາດາມຈະ [ກ]ຮັບສ່ວນກິນ ໝາກໄມ້ຂອງ
ຕົ້ນ ໄມ້ ແຫ່ງ ຊີວິດ ໃນ ເວລານັ້ນ, ກໍ ຈະ ບໍ່
ມີຄວາມຕາຍ ເລີຍ, ແລະ ພຣະຄຳກໍບໍ່ມີ
ຄວາມໝາຍ ເປັນການ ເຮັດ ໃຫ້ພຣະ ເຈົ້າ
ເປັນຜູ້ກ່າວເທັດ, ເພາະພຣະອົງໄດ້ກ່າວໄວ້
ວ່າ: [ຂ]ຖ້າຫາກເຈົ້າກິນ ເຈົ້າຈະຕາຍຢ່າງແນ່
ນອນ.
24 ແລະ ພວກເຮົາເຫັນວ່າ [ກ]ຄວາມຕາຍ
ມາ ຫາ ມະນຸດ ຊາດ, ແທ້ ຈິງ ແລ້ວ , ເປັນ
ຄວາມຕາຍທີ່ແອມມິວເລັກເວົ້າເຖິງ, ຊຶ່ງຄື
ຄວາມຕາຍທາງໂລກ; ເຖິງຢ່າງໃດກໍຕາມ
ຍັງມີໄລຍະເວລາທີ່ປະທານໃຫ້ [ຂ]ມະນຸດ
ຊຶ່ງໃນເວລານັ້ນ ພວກເຂົາຈະໄດ້ກັບໃຈ;
ສະນັ້ນ ຊີວິດນີ້ຈຶ່ງມາເປັນສະພາວະແຫ່ງ
ການທົດລອງ; ເປັນເວລາທີ່ [ຄ]ຕຽມພ້ອມທີ່
ຈະພົບພຣະເຈົ້າ; ເປັນເວລາທີ່ຕຽມພ້ອມ
ເພື່ອສະພາບອັນບໍ່ຮູ້ຈັກຈົບ ຊຶ່ງພວກເຮົາ
ໄດ້ເວົ້າມາແລ້ວ, ຊຶ່ງຢູ່ຫລັງຈາກການຟື້ນ
ຄືນຊີວິດຂອງຄົນຕາຍ.
25 ບັດນີ້, ຖ້າຫາກບໍ່ມີ [ກ]ແຜນແຫ່ງການ
ໄຖ່ ຊຶ່ງວາງໄວ້ນັບ ຕັ້ງແຕ່ການວາງຮາກ
ຖານຂອງໂລກແລ້ວ, ມັນຈະມີ [ຂ]ການຟື້ນ
ຄືນຊີວິດຂອງຄົນຕາຍບໍ່ໄດ້; ແຕ່ມີແຜນ
ແຫ່ງການໄຖ່ວາງໄວ້ ຊຶ່ງຈະເຮັດໃຫ້ເກີດ
ການຟື້ນຄືນຊີວິດຂອງຄົນຕາຍຊຶ່ງໄດ້ກ່າວ
ມາແລ້ວ.
26 ແລະ ບັດນີ້ຈົ່ງເບິ່ງ, ຖ້າຫາກເປັນໄປ
ໄດ້ວ່າ ບິດາມານດາຄົນທຳອິດຂອງພວກ
ເຮົາ ອອກ ໄປກິນໝາກ ໄມ້ ຈາກ [ກ]ຕົ້ນໄມ້
ແຫ່ງຊີວິດອີກແລ້ວ ທັງສອງກໍຈະທຸກທໍລະ
ມານຕະຫລອດການ, ໂດຍບໍ່ມີສະພາບ
ການຕຽມ ແລະ [ຂ]ແຜນແຫ່ງການໄຖ່ຈະລົ້ມ

20 *ກ* ຄມພ ອະມະຕະ, ຄວາມ ເປັນອະມະຕະ.
21 *ກ* ປຖກ 3:24; ແອວ 42:2; ມຊ 4:31. ຄມພ ເຄຣູບິມ.
*ຂ* ຄມພ ເອເດນ.
22 *ກ* ຄມພ ການຕົກຂອງ ອາດາມ ແລະ ເອວາ.
*ຂ* ປຖກ 3:6; 2 ນຟ 2:15–19; ມຊຢ 3:26.
*ຄ* ມຊຢ 16:4–5.
23 *ກ* ແອວ 42:2–9.
*ຂ* ປຖກ 2:17.
24 *ກ* ຄມພ ຄວາມຕາຍ ທາງຮ່າງກາຍ.
*ຂ* 2 ນຟ 2:21; ມຊ 5:8–12.
*ຄ* ແອວ 34:32–35.
25 *ກ* ຄມພ ແຜນແຫ່ງການໄຖ່.
*ຂ* 2 ນຟ 2:8; ແອວ 7:12; 42:23.
26 *ກ* ປຖກ 2:9; 1 ນຟ 15:36; ແອວ 32:40.
*ຂ* ແອວ 34:8–16; 42:6–28; ມຊ 6:59–62.

ເຫລວໄປ, ແລະ ພຣະຄຳຂອງພຣະເຈົ້າກໍ
ຈະບໍ່ມີຄວາມໝາຍ ແລະ ບໍ່ເກີດຜົນເລີຍ.
27 ແຕ່ຈົ່ງເບິ່ງ, ມັນບໍ່ໄດ້ເປັນເຊັ່ນນັ້ນ;
ແຕ່ [ກ]ກຳນົດໃຫ້ມະນຸດວ່າ ພວກເຂົາຕ້ອງ
ຕາຍ; ແລະ ຫລັງຈາກຄວາມຕາຍ, ພວກ
ເຂົາຕ້ອງມາຫາ [ຂ]ການພິພາກສາ, ຊຶ່ງເປັນ
ການພິພາກສາອັນດຽວກັບທີ່ພວກເຮົາໄດ້
ເວົ້າມາ, ຊຶ່ງເປັນບ່ອນສຸດ.
28 ແລະ ຫລັງຈາກພຣະເຈົ້າໄດ້ກຳນົດ
ວ່າ ເລື່ອງເຫລົ່ານີ້ຈະມາເຖິງມະນຸດ, ຈົ່ງ
ເບິ່ງ, ເມື່ອນັ້ນ ພຣະອົງຈຶ່ງເຫັນວ່າສົມຄວນ
ທີ່ມະນຸດຈະຮູ້ກ່ຽວກັບເລື່ອງທີ່ພຣະອົງກຳ
ນົດໄວ້ໃຫ້ພວກເຂົາ;
29 ສະນັ້ນ ພຣະອົງຈຶ່ງໄດ້ສົ່ງ [ກ]ທູດລົງມາ
ເວົ້າກັບພວກເຂົາ, ຜູ້ທີ່ໄດ້ເຮັດໃຫ້ມະນຸດ
ເຫັນລັດສະໝີພາບຂອງພຣະອົງ.
30 ແລະ ນັບ ແຕ່ ເວ ລາ ນັ້ນ ມາ ພວກ
ເຂົາເລີ່ມເອີ້ນຫາພຣະນາມຂອງພຣະອົງ;
ສະນັ້ນ ພຣະ ເຈົ້າ ຈຶ່ງ [ກ]ກ່າວ ກັບ ມະນຸດ,
ແລະ ໃຫ້ພວກເຂົາຮູ້ຈັກ [ຂ]ແຜນແຫ່ງການ
ໄຖ່, ຊຶ່ງຕຽມໄວ້ແລ້ວນັບຕັ້ງແຕ່ [ຄ]ການວາງ
ຮາກຖານຂອງໂລກ; ແລະ ການນີ້ພຣະອົງ
ຈຶ່ງເຮັດໃຫ້ພວກເຂົາຮູ້ຕາມສັດທາ ແລະ
ການກັບໃຈຂອງພວກເຂົາ ແລະ ວຽກງານ
ອັນບໍລິສຸດຂອງພວກເຂົາ.
31 ດັ່ງນັ້ນ, ພຣະອົງຈຶ່ງປະທານ [ກ]ພຣະ
ບັນຍັດໃຫ້ແກ່ມະນຸດໂດຍໃນຂັ້ນຕົ້ນພວກ
ເຂົາລ່ວງລະເມີດພຣະບັນຍັດ [ຂ]ທຳອິດ ຊຶ່ງ
ກ່ຽວກັບເລື່ອງທີ່ເປັນຂອງທາງໂລກ, ແລະ
ກາຍມາເປັນເໝືອນດັ່ງພຣະເຈົ້າ, ໂດຍ
[ຄ]ການຮູ້ຈັກຄວາມດີຈາກຄວາມຊົ່ວ, ເຮັດ
ໃຫ້ຕົກຢູ່ໃນສະພາບທີ່ຈະ [ງ]ປະຕິບັດ ຫລື
ຖືກໃຫ້ຢູ່ໃນສະພາບທີ່ຈະກະທຳຕາມ
ຄວາມປະສົງ ແລະ ຄວາມພໍໃຈຂອງຕົນ
ເອງ, ບໍ່ວ່າຈະເຮັດຄວາມຊົ່ວ ຫລື ເຮັດ
ຄວາມດີ—
32 ສະນັ້ນ ພຣະ ເຈົ້າ ຈຶ່ງ ປະທານ ພຣະ
ບັນ ຍັດ ໃຫ້ແກ່ພວກເຂົາ, ຫລັງຈາກເຮັດ
ໃຫ້ພວກເຂົາ [ກ]ຮູ້ແຜນແຫ່ງການໄຖ່ ເພື່ອ
ພວກເຂົາຈະບໍ່ເຮັດຄວາມຊົ່ວ, ຊຶ່ງໂທດ
ຂອງການນີ້ຄື [ຂ]ຄວາມຕາຍເທື່ອທີສອງ, ຊຶ່ງ
ເປັນຄວາມຕາຍອັນເປັນນິດໃນເລື່ອງອັນ
ກ່ຽວກັບຄວາມຊອບທຳ; ເພາະແຜນແຫ່ງ
ການໄຖ່ຈະມີອຳນາດກັບຄົນເຊັ່ນນັ້ນບໍ່ໄດ້,
ເພາະຕາມພຣະກະລຸນາທິຄຸນອັນເລີດລ້ຳ
ຂອງພຣະເຈົ້າ, ວຽກງານແຫ່ງ [ຄ]ຄວາມຍຸດ
ຕິທຳຈະຖືກທຳລາຍບໍ່ໄດ້.
33 ແຕ່ພຣະເຈົ້າໄດ້ເອີ້ນຫາມະນຸດໃນ
ພຣະນາມຂອງພຣະບຸດຂອງພຣະອົງ, (ນີ້
ແມ່ນແຜນແຫ່ງການໄຖ່ ຊຶ່ງກຳນົດໄວ້)
ໂດຍກ່າວວ່າ: ຖ້າຫາກເຈົ້າຈະກັບໃຈ,
ແລະ ບໍ່ເຮັດໃຈແຂງກະດ້າງ, ເມື່ອນັ້ນເຮົາ
ຈະເມດຕາເຈົ້າ ໂດຍຜ່ານທາງພຣະບຸດອົງ
ດຽວທີ່ຖືກຳເນີດຂອງເຮົາ;
34 ສະນັ້ນ, ຜູ້ໃດກໍຕາມທີ່ກັບໃຈ ແລະ
ບໍ່ເຮັດໃຈແຂງກະດ້າງ, ເຂົາຈະມີສິດທິໃນ
[ກ]ຄວາມເມດຕາໂດຍທາງພຣະບຸດອົງດຽວ
ທີ່ຖືກຳເນີດຂອງເຮົາໄປສູ່ [ຂ]ການປົດບາບ

27 ກ ໂຢບ 7:1; ອຣ 9:27; ຄພ 42:48.
ຂ ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
29 ກ ມຣນ 7:25, 31; ຄພ 29:42.
30 ກ ມຊ 5:4–5; 6:51.
ຂ ຄມພ ແຜນແຫ່ງການໄຖ່.
ຄ ມຊຢ 18:13; ແອວ 13:3, 5, 7–8.
31 ກ ຄມພ ພຣະບັນຍັດຂອງພຣະເຈົ້າ.
ຂ ປຖກ 2:16–17; 2 ນຟ 2:18–19.
ຄ ປຖກ 3:22–23; ມຊ 4:11.
ງ 2 ນຟ 2:16. ຄມພ ອຳເພີໃຈ.
32 ກ ມຊ 5:4–9.
ຂ ຄມພ ຄວາມຕາຍທາງວິນຍານ.
ຄ ມຊຢ 15:27; ແອວ 34:15–16; 42:15.
34 ກ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
ຂ ຄມພ ປົດບາບ, ການປົດບາບ.

ຂອງເຂົາ; ແລະ ຄົນເຫລົ່ານັ້ນຈະເຂົ້າໄປ
ໃນ [ຄ]ທີ່ພັກຂອງເຮົາ.
35 ແລະ ຜູ້ໃດກໍຕາມທີ່ຈະເຮັດໃຈແຂງ
ກະດ້າງ ແລະ ຈະເຮັດຄວາມຊົ່ວຮ້າຍ
ແລ້ວ, ຈົ່ງເບິ່ງ, ເຮົາສາບານໃນຄວາມຄຽດ
ແຄ້ນຂອງເຮົາວ່າ ເຂົາຈະເຂົ້າໄປໃນທີ່ພັກ
ຂອງເຮົາບໍ່ໄດ້.
36 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບພວກເຈົ້າວ່າ
ຖ້າຫາກພວກເຈົ້າຈະເຮັດໃຈແຂງກະດ້າງ
ພວກເຈົ້າຈະເຂົ້າໄປໃນທີ່ພັກຂອງພຣະ
ເຈົ້າບໍ່ໄດ້; ສະນັ້ນ ຄວາມຊົ່ວຮ້າຍຂອງ
ພວກເຈົ້າຈະທ້າທາຍພຣະອົງຈົນພຣະອົງ
ສົ່ງພຣະພິໂລດຂອງພຣະອົງລົງມາເທິງ
ພວກເຈົ້າເໝືອນດັ່ງການທ້າທາຍເທື່ອ
[ກ]ທຳອິດ, ແທ້ຈິງແລ້ວ, ຕາມພຣະຄຳຂອງ
ພຣະອົງນັ້ນ ການທ້າທາຍເທື່ອສຸດທ້າຍກໍ
ເໝືອນດັ່ງການທ້າທາຍເທື່ອທຳອິດ, ມັນ
ຈະເປັນ [ຂ]ຄວາມພິນາດອັນເປັນນິດຂອງ
ຈິດວິນຍານຂອງພວກເຈົ້າ; ສະນັ້ນ, ຕາມ
ພຣະຄຳຂອງພຣະອົງ, ຄວາມຕາຍເທື່ອສຸດ
ທ້າຍກໍເໝືອນດັ່ງຄວາມຕາຍເທື່ອທຳອິດ.
37 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ເມື່ອເຫັນວ່າພວກເຮົາຮູ້ຈັກເລື່ອງເຫລົ່າ
ນີ້ແລ້ວ, ແລະ ມັນເປັນຄວາມຈິງ, ຈົ່ງຂໍ
ໃຫ້ພວກເຮົາກັບໃຈ ແລະ ບໍ່ເຮັດໃຈແຂງ
ກະດ້າງອີກຕໍ່ໄປ, ວ່າພວກເຮົາຈະບໍ່ [ກ]ທ້າ
ທາຍພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຮົາ ຈົນວ່າພຣະອົງສົ່ງພຣະພິໂລດ
ຂອງພຣະອົງລົງມາເທິງພວກເຮົາ; ໃນ
ພຣະບັນຍັດທີສອງຂອງພຣະອົງ ຊຶ່ງພຣະ
ອົງໄດ້ປະທານໃຫ້ແກ່ພວກເຮົາ; ແຕ່ຂໍໃຫ້
ພວກເຮົາເຂົ້າໄປໃນ [ຂ]ທີ່ພັກຂອງພຣະເຈົ້າ,
ຊຶ່ງຕຽມໄວ້ຕາມພຣະຄຳຂອງພຣະອົງເຖີດ.

## ບົດທີ 13

*ພວກຜູ້ຊາຍຖືກເອີ້ນໃຫ້ເປັນມະຫາປະໂລຫິດຍ້ອນສັດທາອັນຍິ່ງໃຫຍ່ ແລະ ວຽກງານດີຂອງເຂົາເຈົ້າ—ເຂົາເຈົ້າຕ້ອງສິດສອນພຣະບັນຍັດ—ຜ່ານຄວາມຊອບທຳ ເຂົາເຈົ້າໄດ້ຮັບການຊຳລະໃຫ້ບໍລິສຸດ ແລະ ເຂົ້າໄປໃນທີ່ພັກຂອງພຣະຜູ້ເປັນເຈົ້າ—ເມນຄິເສເດັກເປັນຜູ້ໜຶ່ງໃນພວກນີ້—ເຫລົ່າທູດປະກາດຂ່າວອັນໜ້າຊື່ນຊົມທົ່ວແຜ່ນດິນ—ພວກເພິ່ນຈະປະກາດການສະເດັດມາອັນແທ້ຈິງຂອງພຣະຄຣິດ. ປະມານ 82 ປີ ກ່ອນ ຄ.ສ.*

1 ແລະ ອີກເທື່ອໜຶ່ງ, ພີ່ນ້ອງຂອງຂ້າພະ
ເຈົ້າ, ຂ້າພະເຈົ້າຢາກໃຫ້ພວກທ່ານລະນຶກ
ເຖິງເວລາທີ່ອົງພຣະຜູ້ເປັນເຈົ້າໄດ້ປະທານ
ພຣະບັນຍັດເຫລົ່ານີ້ໃຫ້ແກ່ລູກຫລານຂອງ
ພຣະອົງ; ແລະ ຂ້າພະເຈົ້າຢາກໃຫ້ພວກ
ທ່ານຈື່ຈຳໄວ້ວ່າອົງພຣະຜູ້ເປັນເຈົ້າ [ກ]ໄດ້
ແຕ່ງຕັ້ງປະໂລຫິດຕາມລະບຽບອັນສັກສິດ
ຂອງພຣະອົງ ຊຶ່ງເປັນໄປຕາມລະບຽບຂອງ
ພຣະບຸດຂອງພຣະອົງ ເພື່ອສິດສອນສິ່ງ
ເຫລົ່ານີ້ໃຫ້ແກ່ຜູ້ຄົນ.
2 ແລະ ປະໂລຫິດເຫລົ່ານັ້ນໄດ້ຮັບການ
ແຕ່ງຕັ້ງຕາມ [ກ]ລະບຽບຂອງພຣະບຸດຂອງ
ພຣະອົງ, ຕາມ [ຂ]ວິທີນັ້ນຜູ້ຄົນຈະໄດ້ຮູ້ຈັກ
ວ່າ ໂດຍວິທີໃດທີ່ຈະລະນຶກຫາພຣະບຸດ
ຂອງພຣະອົງເພື່ອການໄຖ່.
3 ແລະ ນີ້ຄືວິທີຕາມທີ່ພວກເຂົາໄດ້ຮັບ

34 *ຄ* ຄມພ ພັກຜ່ອນ.
36 *ກ* ຢຄ 1:7–8; ແອວ 42:6, 9, 14.
*ຂ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
37 *ກ* 1 ນຟ 17:30; ຢຄ 1:8; ຣອມ 7:18.
*ຂ* ແອວ 13:6–9.
**13** 1 *ກ* ອຣຣ 2:9, 11.
2 *ກ* ຄພ 107:2–4.
*ຂ* ແອວ 13:16.

ການແຕ່ງຕັ້ງ—ໂດຍທີ່ຖືກ [ກ]ເອີ້ນ ແລະ ຖືກ
[ຂ]ຕຽມໄວ້ນັບຕັ້ງແຕ່ [ຄ]ການວາງຮາກຖານ
ຂອງໂລກຕາມ [ງ]ຄວາມຮູ້ລ່ວງໜ້າ ຂອງ
ພຣະເຈົ້າ, ອັນ ເນື່ອງມາຈາກສັດທາອັນ
ແຮງກ້າ ແລະ ວຽກງານດີຂອງພວກເຂົາ;
ໂດຍທີ່ໃນຕອນທຳອິດຖືກປະປ່ອຍໄວ້
ໃຫ້ [ຈ]ເລືອກເອົາຄວາມດີ ຫລື ຄວາມຊົ່ວ;
ສະນັ້ນ ໂດຍທີ່ພວກເຂົາເລືອກເອົາຄວາມ
ດີ, ແລະ ໃຊ້ [ສ]ສັດທາຢ່າງລົ້ນເຫລືອ, ຈຶ່ງ
ໄດ້ຖືກ [ຊ]ເອີ້ນໃຫ້ຮັບຕຳແໜ່ງອັນສັກສິດ,
ແທ້ຈິງແລ້ວ, ດ້ວຍຕຳແໜ່ງອັນສັກສິດນັ້ນ
ທີ່ໄດ້ຕຽມໄວ້ພ້ອມກັນ, ແລະ ຕາມການໄຖ່
ທີ່ໄດ້ຕຽມໄວ້ສຳລັບຄົນເຊັ່ນນັ້ນຄືກັນ.
4 ແລະ ພວກເຂົາຖືກ [ກ]ເອີ້ນໃຫ້ຮັບຕຳ
ແໜ່ງອັນສັກສິດນີ້ ເປັນຍ້ອນສັດທາອັນຍິ່ງ
ໃຫຍ່ຂອງພວກເຂົາ, ໃນຂະນະທີ່ຄົນອື່ນບໍ່
ຍອມຮັບເອົາພຣະວິນຍານຂອງພຣະເຈົ້າ
ເນື່ອງຈາກວ່າຄວາມແຂງກະດ້າງຂອງໃຈ
ຂອງພວກເຂົາ ແລະ ຄວາມມືດດັບຂອງ
ຈິດໃຈຂອງພວກເຂົາ, ຖ້າຫາກພວກເຂົາບໍ່
ເປັນໄປແນວນີ້ແລ້ວ ພວກເຂົາກໍຈະ [ຂ]ມີສິດ
ຫລາຍຄືກັນກັບພີ່ນ້ອງຂອງພວກເຂົາ.
5 ຫລື ໂດຍສະຫລຸບ, ໃນຕອນທຳອິດ
ພວກເຂົາກໍຢູ່ໃນຖານະ [ກ]ດຽວກັນກັບພີ່
ນ້ອງຂອງພວກເຂົາ; ການເອີ້ນທີ່ສັກສິດນີ້
ຈຶ່ງຖືກຕຽມໄວ້ດັ່ງນັ້ນນັບຕັ້ງແຕ່ການວາງ
ຮາກຖານຂອງໂລກສຳລັບຄົນເຊັ່ນນັ້ນທີ່ບໍ່
ເຮັດໃຈແຂງກະດ້າງ, ໂດຍໃນ ແລະ ຜ່ານ
ການຊົດໃຊ້ແທນຂອງພຣະບຸດອົງດຽວທີ່ຖື
ກຳເນີດ, ຜູ້ຊຶ່ງໄດ້ຖືກຕຽມໄວ້—
6 ແລະ ໂດຍທີ່ໄດ້ຮັບການເອີ້ນໂດຍ
ການເອີ້ນອັນສັກສິດນີ້, ແລະ ຖືກແຕ່ງຕັ້ງ
ສູ່ຖານະປະໂລຫິດສູງແຫ່ງລະບຽບອັນ
ສັກສິດຂອງພຣະເຈົ້າ ເພື່ອສິດສອນພຣະ
ບັນຍັດຂອງພຣະອົງໃຫ້ລູກຫລານມະນຸດ,
ເພື່ອພວກເຂົາຈະໄດ້ເຂົ້າໄປໃນ [ກ]ທີ່ພັກ
ຂອງພຣະອົງຄືກັນ—
7 ຖານະປະໂລຫິດສູງນີ້ເປັນໄປຕາມ
ລະບຽບຂອງພຣະບຸດຂອງພຣະອົງ, ຊຶ່ງ
ລະບຽບນີ້ເປັນມານັບຕັ້ງແຕ່ການວາງຮາກ
ຖານຂອງໂລກ; ຫລື ອີກຄຳໜຶ່ງ, [ກ]ບໍ່ມີ
ການເລີ່ມຕົ້ນຂອງມື້ ຫລື ບ່ອນຈົບຂອງປີ
ເລີຍ, ໂດຍຖືກຕຽມໄວ້ຈາກຊົ່ວນິລັນດອນ
ເຖິງຕະຫລອດຊົ່ວນິລັນດອນຕາມ [ຂ]ຄວາມ
ຮູ້ລ່ວງໜ້າໃນທຸກສິ່ງທຸກຢ່າງຂອງພຣະ
ອົງ—
8 ບັດນີ້ພວກເຂົາຖືກ [ກ]ແຕ່ງຕັ້ງຕາມວິທີ
ນີ້—ໂດຍຖືກເອີ້ນໃຫ້ຮັບຕຳແໜ່ງອັນສັກ
ສິດ, ແລະ ຖືກແຕ່ງຕັ້ງດ້ວຍພິທີການອັນ
ສັກສິດ, ແລະ ຮັບເອົາຖານະປະໂລຫິດ
ສູງແຫ່ງລະບຽບອັນສັກສິດ, ຊຶ່ງຕຳແໜ່ງ,
ແລະ ພິທີການ, ແລະ ຖານະປະໂລຫິດສູງ
ນີ້, ບໍ່ມີການເລີ່ມຕົ້ນ ຫລື ບ່ອນຈົບ—
9 ພວກນີ້ຈຶ່ງກັບກາຍມາເປັນ [ກ]ມະຫາ
ປະໂລຫິດຕະຫລອດໄປຕາມລະບຽບຂອງ
ພຣະບຸດອົງດຽວທີ່ຖືກຳເນີດຈາກພຣະ
ບິດາ, ຜູ້ທີ່ບໍ່ມີການເລີ່ມຕົ້ນຂອງມື້ ຫລື
ບ່ອນຈົບຂອງປີຜູ້ເຕັມປ່ຽມໄປດ້ວຍ [ຂ]ພຣະ

3ກ ຄພ 127:2.
ຄມພ ແຕ່ງຕັ້ງລ່ວງໜ້າ, ການແຕ່ງຕັ້ງລ່ວງໜ້າ; ເລືອກ, ການເລືອກ.
ຂ ຄພ 138:55–56.
ຄ ແອວ 12:25, 30.
ຄມພ ຊີວິດກ່ອນເກີດ.
ງ ຄພ 38:2.
ຈ ຄມພ ອຳເພີໃຈ.
ສ ຄມພ ສັດທາ.
ຊ ຄມພ ຖານະປະໂລຫິດ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
4ກ ອທ 12:10.
ຂ 1 ນຟ 17:32–35.
5ກ 2 ນຟ 26:28.
6ກ ແອວ 12:37; 16:17.
ຄມພ ພັກຜ່ອນ.
7ກ ຮຣ 7:3.
ຂ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
8ກ ຄພ 84:33–42.
ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
9ກ ຄມພ ມະຫາປະໂລຫິດ.
ຂ 2 ນຟ 2:6.
ຄມພ ພຣະຄຸນ.

ຄຸນ, ຄວາມສະເໜີພາບ, ແລະ ຄວາມຈິງ.
ແລະ ເປັນໄປດັ່ງນັ້ນ. ອາແມນ.
10 ບັດ ນີ້, ດັ່ງ ທີ່ ຂ້າ ພະ ເຈົ້າ ໄດ້ ເວົ້າ
ມາແລ້ວກ່ຽວ ກັບ ຖານະອັນສັກສິດ ຫລື
[ກ]ຖານະປະໂລຫິດສູງນີ້, ໄດ້ມີຫລາຍຄົນທີ່
ໄດ້ຖືກແຕ່ງຕັ້ງ ແລະ ກາຍມາເປັນມະຫາ
ປະໂລຫິດຂອງພຣະເຈົ້າ; ແລະ ເປັນຍ້ອນ
ສັດທາອັນຍິ່ງໃຫຍ່ ແລະ [ຂ]ການກັບໃຈ,
ແລະ ຄວາມຊອບທຳຂອງເຂົາເຈົ້າທີ່ມີຕໍ່
ພຣະພັກຂອງພຣະເຈົ້າ, ເຂົາເຈົ້າຈຶ່ງເລືອກ
ທີ່ຈະກັບໃຈ ແລະ ກະທຳໃນສິ່ງທີ່ຊອບທຳ
ແທນທີ່ຈະເລືອກເອົາຄວາມຕາຍ;
11 ສະນັ້ນ ເຂົາເຈົ້າຈຶ່ງໄດ້ຖືກເອີ້ນຕາມ
ຖານະອັນສັກສິດນີ້ ແລະ ໄດ້ຮັບ [ກ]ການ
ຊຳລະໃຫ້ບໍລິສຸດ, ແລະ [ຂ]ອາພອນຂອງ
ເຂົາເຈົ້າຖືກລ້າງໃຫ້ຂາວສະອາດແລ້ວ
ໂດຍໂລຫິດຂອງພຣະເມສານ້ອຍ.
12 ບັດນີ້ຫລັງຈາກ [ກ]ພຣະວິນຍານບໍລິ
ສຸດໄດ້ [ຂ]ຊຳລະເຂົາເຈົ້າໃຫ້ບໍລິສຸດແລ້ວ,
ເຮັດໃຫ້ອາພອນຂອງເຂົາເຈົ້າຂາວສະອາດ
[ຄ]ບໍລິສຸດ ແລະ ປາດສະຈາກມົນທິນຕໍ່ພຣະ
ພັກຂອງພຣະເຈົ້າ, ເຂົາເຈົ້າຈຶ່ງເບິ່ງ [ງ]ບາບບໍ່
ໄດ້ ນອກຈາກຈະມີແຕ່ [ຈ]ຄວາມກຽດຊັງມັນ
ເທົ່ານັ້ນ; ແລະ ມີຄົນຢ່າງຫລວງຫລາຍ ທີ່
ຖືກເຮັດໃຫ້ບໍລິສຸດ ແລະ ເຂົ້າໄປໃນທີ່ພັກ
ຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາ.
13 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າຢາກໃຫ້ພວກທ່ານຖ່ອມຕົວຕໍ່
ພຣະພັກຂອງພຣະເຈົ້າ, ແລະ ນຳ [ກ]ຜົນ
ທີ່ສົມກັບການກັບໃຈອອກມາ, ເພື່ອພວກ
ທ່ານຈະໄດ້ເຂົ້າໄປໃນທີ່ພັກແຫ່ງນັ້ນ.
14 ແທ້ຈິງແລ້ວ, ຈົ່ງຖ່ອມຕົວຄືກັນກັບຜູ້
ຄົນໃນເວລາຂອງ [ກ]ເມນຄິເສເດັກ, ຜູ້ເປັນ
ມະຫາປະໂລຫິດຜູ້ໜຶ່ງຕາມຖານະດຽວກັນ
ນີ້ ຊຶ່ງຂ້າພະເຈົ້າໄດ້ເວົ້າເຖິງ, ຜູ້ທີ່ໄດ້ຮັບ
ຖານະປະໂລຫິດສູງໄວ້ກັບຕົວຕະຫລອດ
ໄປ.
15 ແລະ ແມ່ນເມນຄິເສເດັກຜູ້ດຽວກັນນີ້
ທີ່ [ກ]ອັບຣາຮາມຈ່າຍ [ຂ]ສ່ວນສິບໃຫ້; ແທ້ຈິງ
ແລ້ວ, ອັບຣາຮາມບັນພະບຸລຸດຂອງພວກ
ເຮົາກໍໄດ້ຈ່າຍສ່ວນສິບໃຫ້ ຊຶ່ງເປັນໜຶ່ງ
ສ່ວນສິບຂອງທຸກສິ່ງທຸກຢ່າງທີ່ເພິ່ນເປັນ
ເຈົ້າຂອງ.
16 ແລະ [ກ]ພິທີການເຫລົ່ານີ້ມີກຳນົດໄວ້
ຕາມນີ້, ເພື່ອໂດຍວິທີນີ້ຜູ້ຄົນຈະໄດ້ລະນຶກ
ຫາພຣະບຸດຂອງພຣະເຈົ້າ, ຊຶ່ງເປັນ [ຂ]ແບບ
ໜຶ່ງຂອງຖານະຂອງພຣະອົງ, ຫລື ເປັນ
ຖານະຂອງພຣະອົງ, ແລະ ນີ້ກໍເພື່ອພວກ
ເຂົາຈະໄດ້ລະນຶກຫາພຣະອົງເພື່ອການປົດ
ບາບຂອງພວກເຂົາ, ເພື່ອພວກເຂົາຈະໄດ້
ເຂົ້າໄປໃນທີ່ພັກຂອງພຣະຜູ້ເປັນເຈົ້າ.
17 ບັດນີ້ເມນຄິເສເດັກຜູ້ນີ້ ເປັນກະສັດ
ປົກຄອງແຜ່ນດິນຊາເລັມ; ແລະ ຜູ້ຄົນຂອງ
ເພິ່ນເກັ່ງກ້າຫລາຍຂຶ້ນໃນຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງ; ແທ້ຈິງແລ້ວ,

---

10 ກ ຄພ 84:18–22.
ຂ ຄມພ ກັບໃຈ, ການກັບໃຈ.
11 ກ ມຊ 6:59–60.
ຂ 1 ນຟ 12:10; ແອວ 5:21–27; 3 ນຟ 27:19–20.
12 ກ ຄມພ ພຣະວິນຍານບໍລິສຸດ.
ຂ ຣມ 8:1–9. ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
ຄ ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
ງ ມຊຢ 5:2; ແອວ 19:33.
ຈ ສພສ 8:13; ແອວ 37:29.
13 ກ ລກ 3:8.
14 ກ ປຈສ ປຖກ 14:25–40 (ພາກທ້ອຍທ້າຍ); ຄພ 84:14. ຄມພ ເມນຄິເສເດັກ.
15 ກ ຄມພ ອັບຣາຮາມ.
ຂ ປຖກ 14:18–20; ມລກ 3:8–10. ຄມພ ສ່ວນສິບ, ເງິນສ່ວນສິບ.
16 ກ ຄມພ ພິທີການ.
ຂ ຄມພ ສັນຍາລັກ.

ພວກເຂົາຫລົງທາງໄປໝົດ; ພວກເຂົາເຕັມ
ໄປດ້ວຍຄວາມຊົ່ວຮ້າຍທຸກຢ່າງ;
18 ແຕ່ວ່າເມນຄິເສເດັກໄດ້ສະແດງ
ສັດທາອັນແຮງກ້າ ແລະ ໄດ້ຮັບໜ້າທີ່ຂອງ
ຖານະປະໂລຫິດສູງ ຕາມ [ກ]ລະບຽບອັນສັກ
ສິດຂອງພຣະເຈົ້າ, ໄດ້ສັ່ງສອນເຖິງການ
ກັບໃຈໃຫ້ແກ່ຜູ້ຄົນຂອງເພິ່ນ. ແລະ ຈົ່ງ
ເບິ່ງ, ພວກເຂົາໄດ້ກັບໃຈ; ແລະ ເມນຄິເສ
ເດັກໄດ້ສະຖາປະນາສັນຕິສຸກຂຶ້ນໃນແຜ່ນ
ດິນໃນເວລາຂອງເພິ່ນ; ສະນັ້ນ ເພິ່ນຈຶ່ງ
ຖືກເອີ້ນວ່າ ເຈົ້າສັນຕິລາດ, ເພາະວ່າເພິ່ນ
ເປັນກະສັດຂອງຊາເລັມ; ແລະ ເພິ່ນໄດ້ປົກ
ຄອງພາຍໃຕ້ບິດາຂອງເພິ່ນ.
19 ແລະ ບັດນີ້ມີ [ກ]ຫລາຍຄົນກ່ອນເພິ່ນ,
ແລະ ມີຫລາຍຄົນຫລັງຈາກເພິ່ນນຳອີກ,
ແຕ່ [ຂ]ບໍ່ມີຜູ້ໃດຍິ່ງໃຫຍ່ກວ່າເພິ່ນ; ສະນັ້ນ,
ຜູ້ຄົນຈຶ່ງກ່າວເຖິງເພິ່ນເລື້ອຍໆໂດຍສະ
ເພາະ.
20 ບັດນີ້ຂ້າພະເຈົ້າບໍ່ຢາກທົບທວນ
ເລື່ອງນີ້ອີກ; ເພາະ ສິ່ງທີ່ຂ້າພະເຈົ້າເວົ້າ
ໄວ້ນັ້ນພຽງພໍແລ້ວ. ຈົ່ງເບິ່ງ, [ກ]ພຣະຄຳພີ
ຢູ່ຕໍ່ໜ້າພວກທ່ານ; ຖ້າຫາກພວກທ່ານ
ຈະ [ຂ]ບິດເບືອນມັນ; ມັນກໍຈະເປັນໄປເພື່ອ
ຄວາມພິນາດຂອງພວກທ່ານເອງ.
21 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອແອວມາກ່າວຄຳເວົ້າເຫລົ່ານີ້ກັບ
ພວກເຂົາແລ້ວ, ເພິ່ນໄດ້ເດ່ມືອອກໄປຫາ
ພວກເຂົາ ແລະ ຮ້ອງຂຶ້ນດ້ວຍສຽງອັນດັງ,
ມີຄຳວ່າ: ບັດນີ້ເຖິງເວລາແລ້ວທີ່ຈະ [ກ]ກັບ
ໃຈ, ເພາະວ່າວັນແຫ່ງຄວາມລອດມາໃກ້
ແລ້ວ;
22 ແທ້ຈິງແລ້ວ, ສຸລະສຽງຂອງພຣະຜູ້
ເປັນເຈົ້າຊຶ່ງອອກຈາກ [ກ]ປາກຂອງເຫລົ່າ
ທູດໄດ້ປະກາດເລື່ອງນີ້ແກ່ທຸກປະຊາຊາດ;
ແທ້ຈິງແລ້ວ, ໄດ້ປະກາດເລື່ອງນີ້ເພື່ອພວກ
ເຂົາຈະມີຂ່າວອັນໜ້າຊື່ນຊົມແຫ່ງຄວາມ
ສຸກ; ແທ້ຈິງແລ້ວ ພຣະອົງໄດ້ແຜ່ຂ່າວອັນ
ໜ້າຊື່ນຊົມໄປໃນບັນດາຜູ້ຄົນທັງໝົດຂອງ
ພຣະອົງ, ແທ້ຈິງແລ້ວ, ໄປເຖິງຄົນທີ່ໄດ້
ແຕກພັດພາກຈາກກັນໄປທົ່ວພື້ນແຜ່ນດິນ
ໂລກ; ດັ່ງນັ້ນ ຂ່າວອັນໜ້າຊື່ນຊົມນີ້ມາ
ຮອດພວກເຮົາແລ້ວ.
23 ແລະ ເລື່ອງເຫລົ່ານີ້ເປັນທີ່ຮູ້ຈັກແກ່
ພວກເຮົາດ້ວຍຄວາມເວົ້າອັນ [ກ]ງ່າຍໆ ເພື່ອ
ພວກເຮົາຈະບໍ່ໄດ້ເຂົ້າໃຈຜິດ; ເພື່ອພວກ
ເຮົາຈະບໍ່ເຮັດຜິດ ແລະ ນີ້ກໍເພາະວ່າການ
ເປັນ [ຂ]ຄົນຊັດເຊພະເນຈອນຂອງພວກເຮົາ
ໄປໃນແຜ່ນດິນແປກໆ; ສະນັ້ນ, ພວກເຮົາ
ຈຶ່ງເປັນທີ່ໂປດປານຂອງພຣະອົງ, ເພາະ
ວ່າພວກເຮົາມີຂ່າວອັນໜ້າຊື່ນຊົມເຫລົ່າ
ນີ້ທີ່ຈະປະກາດຕໍ່ທຸກຄົນພວກເຮົາທົ່ວທຸກ
ແຫ່ງໃນທຸກສ່ວນຂອງສວນອະງຸ່ນຂອງ
ພວກເຂົາ.
24 ເພາະຈົ່ງເບິ່ງ, [ກ]ເຫລົ່າທູດກຳລັງປະ
ກາດເລື່ອງນີ້ຕໍ່ຫລາຍຄົນໃນແຜ່ນດິນຂອງ
ພວກເຮົາ; ແລະ ນີ້ກໍເພື່ອຈຸດປະສົງໃນການ
ຕຽມໃຈຂອງລູກຫລານມະນຸດທີ່ຈະຮັບ
ພຣະຄຳຂອງພຣະອົງໃນເວລາທີ່ພຣະອົງ
ສະເດັດມາໃນລັດສະໝີພາບຂອງພຣະອົງ.
25 ແລະ ບັດນີ້ພວກເຮົາພຽງແຕ່ຄອຍຟັງ
ຂ່າວອັນໜ້າປິຕິຍິນດີເລື່ອງການສະເດັດ
ມາຂອງພຣະອົງທີ່ປະກາດແກ່ພວກເຮົາ

18 *ກ* ຄມພ ຖານະປະໂລຫິດແຫ່ງເມນຄິເສເດັກ.
19 *ກ* ຣລມ 8:18; ຄພ 84:6–16; 107:40–55.
*ຂ* ຄພ 107:1–4.
20 *ກ* ຄມພ ພຣະຄຳພີ.
*ຂ* 2 ປຕ 3:16; ແອວ 41:1.
21 *ກ* ຄມພ ກັບໃຈ, ການກັບໃຈ.
22 *ກ* ແອວ 10:20.
23 *ກ* 2 ນຟ 25:7–8; 31:3; 32:7; ຢຄ 4:13; ອທ 12:39.
*ຂ* ຢຄ 7:26.
24 *ກ* ແອວ 10:10; 39:19.

ໂດຍ ປາກ ຂອງ ທູດ ເພາະ ວ່າ ເວລາ ຈະ ມາ
ເຖິງ ແລ້ວ; ແລະ ພວກ ເຮົາ [ກ]ບໍ່ຮູ້ຈັກວ່າໄວ
ປານ ໃດ. ຂໍໃຫ້ພຣະເຈົ້າເຮັດໃຫ້ມັນເປັນ
ໄປໃນວັນເວລາຂອງຂ້າພະເຈົ້າເຖີດ; ແຕ່
ວ່າມັນຈະຊ້າ ຫລື ໄວພຽງໃດນັ້ນ ຂ້າພະ
ເຈົ້າຈະປິຕິຍິນດີໃນເລື່ອງນີ້.
26 ແລະ ມັນ ຈະ ເປັນ ທີ່ຮູ້ຈັກແກ່ [ກ]ຄົນ
ຊອບທຳ ແລະ ຜູ້ບໍລິສຸດໂດຍປາກຂອງທູດ
ໃນເວລາແຫ່ງການສະເດັດມາຂອງພຣະ
ອົງ, ເພື່ອໃຫ້ຄຳເວົ້າຂອງບັນພະບຸລຸດຂອງ
ພວກເຮົາສຳເລັດ, ຕາມເລື່ອງທີ່ເຂົາເຈົ້າ
ເວົ້າໄວ້ກ່ຽວກັບພຣະອົງ, ຊຶ່ງເປັນໄປຕາມ
ວິນຍານແຫ່ງການທຳນາຍຊຶ່ງຢູ່ກັບພວກ
ເພິ່ນໃນເວລານັ້ນ.
27 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າ [ກ]ປາດຖະໜາຈາກສ່ວນເລິກທີ່
ສຸດຂອງໃຈຂອງຂ້າພະເຈົ້າ, ແທ້ຈິງແລ້ວ,
ດ້ວຍຄວາມເປັນຫ່ວງຢ່າງໃຫຍ່ຫລວງຈົນ
ເຖິງຄວາມເຈັບປວດ ໃຫ້ພວກທ່ານເຊື່ອຟັງ
ຄຳຂອງຂ້າພະເຈົ້າ, ແລະ ປະຖິ້ມບາບຂອງ
ພວກທ່ານເຖີດ, ແລະ ຢ່າເລື່ອນວັນແຫ່ງ
ການກັບໃຈຂອງພວກທ່ານເລີຍ;
28 ແຕ່ໃຫ້ພວກທ່ານຖ່ອມຕົວຕໍ່ພຣະພັກ
ຂອງພຣະຜູ້ເປັນເຈົ້າ, ແລະ ເອີ້ນຫາພຣະ
ນາມອັນສັກສິດຂອງພຣະອົງ, ແລະ [ກ]ເຝົ້າ
ເບິ່ງ ແລະ ອະທິຖານສະເໝີ, ເພື່ອພວກ
ທ່ານຈະບໍ່ຖືກ [ຂ]ລໍ້ລວງຈົນເກີນກວ່າທີ່ພວກ
ທ່ານຈະອົດທົນໄດ້, ແລະ ຖືກພຣະວິນຍານ
ສັກສິດນຳພາໄປເພື່ອກາຍເປັນຄົນຖ່ອມ
ຕົວ, [ຄ]ອ່ອນໂຍນ, ສອນງ່າຍ, ອົດທົນ, ເຕັມ
ໄປດ້ວຍຄວາມຮັກ ແລະ ຄວາມອົດກັ້ນ;
29 [ກ]ໂດຍມີສັດທາໃນພຣະຜູ້ເປັນເຈົ້າ; ມີ
ຄວາມຫວັງວ່າ ພວກທ່ານຈະໄດ້ຮັບຊີວິດ
ນິລັນດອນ; ມີ [ຂ]ຄວາມຮັກຂອງພຣະເຈົ້າ
ຢູ່ໃນໃຈຂອງພວກທ່ານສະເໝີ, ເພື່ອພວກ
ທ່ານ ຈະ ໄດ້ ຖືກ ຍົກ ຂຶ້ນ ໃນ ວັນ ສຸດ ທ້າຍ
ແລະ ເຂົ້າໄປໃນ [ຄ]ທີ່ພັກຂອງພຣະອົງ.
30 ແລະ ຂໍ ໃຫ້ ພຣະ ຜູ້ ເປັນ ເຈົ້າ ຈົ່ງ
ປະທານ ການ ກັບ ໃຈ ໃຫ້ ແກ່ ພວກ ທ່ານ
ດ້ວຍເຖີດ, ເພື່ອພວກທ່ານຈະບໍ່ເອົາພຣະ
ພິໂລດຂອງພຣະອົງລົງມາເທິງພວກທ່ານ,
ເພື່ອພວກທ່ານຈະບໍ່ຖືກມັດດ້ວຍສາຍໂສ້
ແຫ່ງ [ກ]ນະລົກ, ເພື່ອພວກທ່ານຈະບໍ່ໄດ້ຮັບ
ຄວາມເຈັບປວດຈາກ [ຂ]ຄວາມຕາຍເທື່ອທີ
ສອງ.
31 ແລະ ແອວມາໄດ້ເວົ້າຂໍ້ຄວາມອື່ນໆ
ອີກຢ່າງຍືດຍາວກັບຜູ້ຄົນຊຶ່ງບໍ່ໄດ້ບັນທຶກ
ໄວ້ໃນໜັງສືເຫລັ້ມນີ້.

## ບົດທີ 14

*ແອວມາກັບແອມມິວເລັກຖືກຄຸມຂັງ ແລະ ຖືກຂ້ຽນຕີ—ຜູ້ທີ່ເຊື່ອຖື ແລະ ພຣະຄຳພີອັນສັກສິດຂອງພວກເຂົາຖືກເຜົາດ້ວຍໄຟ—ຄົນທີ່ຕາຍຍ້ອນຄວາມເຊື່ອເຫລົ່ານັ້ນຖືກພຣະຜູ້ເປັນເຈົ້າຮັບໄວ້ໃນລັດສະໝີພາບ—ຝາຄຸກແຍກອອກ ແລະ ພັງລົງ—ແອວມາກັບແອມມິວເລັກຖືກປົດປ່ອຍ, ແລະ ພວກທີ່ກົດຂີ່ຂົ່ມເຫັງພວກເພິ່ນໄດ້ຖືກຂ້າຕາຍ. ປະມານ 82–81 ປີກ່ອນ ຄ.ສ.*

25 ກ 1 ນຟ 10:4; 3 ນຟ 1:13.
26 ກ ອມ 3:7; ລກ 2:8–11.
27 ກ ມຊຢ 28:3.
28 ກ ຄມພ ຍາມ, ຄົນຍາມ; ອະທິຖານ, ການອະທິຖານ, ຄຳອະທິຖານ.
ຂ 1 ກຣທ 10:13.
ຄ ຄມພ ອົດທົນ, ຄວາມອົດທົນ; ອ່ອນໂຍນ, ຄວາມອ່ອນໂຍນ.
29 ກ ແອວ 7:24.
ຂ ຄພ 20:31; 76:116. ຄມພ ໃຈບຸນ, ຄວາມໃຈບຸນ.
ຄ ຄພ 84:24.
30 ກ ຄມພ ນະລົກ; ອັບປະໂຫຍດ, ຄວາມອັບປະໂຫຍດ.
ຂ ຄມພ ຄວາມຕາຍທາງວິນຍານ.

1 ແລະ ເຫດການໄດ້ບັງເກີດຂຶ້ນ ຫລັງຈາກແອວມາເວົ້າກັບຜູ້ຄົນ ຈົບ ລົງ ແລ້ວ ຫລາຍຄົນໃນພວກເຂົາໄດ້ເຊື່ອຖືໃນຄຳເວົ້າຂອງເພິ່ນ, ແລະ ກັບໃຈ, ແລະ ເລີ່ມຄົ້ນຄວ້າ [ກ]ພຣະຄຳພີ.

2 ແຕ່ວ່າຄົນສ່ວນຫລາຍໃນພວກນີ້ປາດຖະໜາຈະທຳລາຍແອວມາກັບແອມມິວເລັກ; ເພາະວ່າພວກເຂົາຄຽດໃຫ້ແອວມາ, ເພາະ [ກ]ຄວາມແຈ່ມແຈ້ງຂອງຄຳເວົ້າຂອງເພິ່ນທີ່ເວົ້າກັບຊີເອສຣອມ; ແລະ ພວກເຂົາເວົ້າອີກວ່າ ແອມມິວເລັກ [ຂ]ຕົວະພວກເຂົາ ແລະ ໝິ່ນປະໝາດກົດໝາຍພ້ອມທັງທະນາຍຄວາມ ແລະ ຜູ້ຕັດສິນຂອງພວກເຂົານຳອີກ.

3 ແລະ ພວກເຂົາຄຽດແຄ້ນໃຫ້ແອວມາກັບແອມມິວເລັກ; ແລະ ເພາະວ່າພວກເພິ່ນໃຫ້ຖ້ອຍຄຳຢ່າງແຈ່ມແຈ້ງ ຟ້ອງຄວາມຊົ່ວຮ້າຍຂອງພວກເຂົາ, ພວກເຂົາຈຶ່ງພະຍາຍາມກຳຈັດພວກເພິ່ນຢ່າງລັບໆ.

4 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ໄດ້ເຮັດແນວນັ້ນ; ແຕ່ພວກເຂົາໄດ້ຈັບ ແລະ ມັດພວກເພິ່ນໄວ້ດ້ວຍເຊືອກທີ່ໝັ້ນ, ແລະ ເອົາພວກເພິ່ນໄປຢູ່ຕໍ່ໜ້າຜູ້ຕັດສິນຂອງແຜ່ນດິນ.

5 ແລະ ຜູ້ຄົນໄດ້ອອກໄປເປັນພະຍານຟ້ອງພວກເພິ່ນ—ໃຫ້ການວ່າ ພວກເພິ່ນໄດ້ໝິ່ນປະໝາດກົດໝາຍ, ທະນາຍຄວາມ, ແລະ ຜູ້ຕັດສິນຂອງແຜ່ນດິນຂອງພວກເຂົາ, ແລະ ໃຫ້ຖ້ອຍຄຳວ່າມີພຣະເຈົ້າແຕ່ພຽງອົງດຽວ, ແລະ ວ່າພຣະອົງຈະສົ່ງພຣະບຸດຂອງພຣະອົງມາໃນບັນດາຜູ້ຄົນ, ແຕ່ວ່າພຣະອົງຈະບໍ່ຊ່ວຍພວກເຂົາໃຫ້ລອດ; ແລະ ຜູ້ຄົນໃຫ້ຖ້ອຍຄຳກ່າວໂທດແອວມາກັບແອມມິວເລັກຫລາຍແນວ. ບັດນີ້ເລື່ອງລາວໄດ້ເກີດຂຶ້ນຢູ່ຕໍ່ໜ້າຫົວໜ້າຜູ້ຕັດສິນຂອງແຜ່ນດິນ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊີເອສຣອມແປກໃຈໃນຄຳເວົ້າເຫລົ່ານັ້ນ; ແລະ ລາວກໍຮູ້ຈັກກ່ຽວກັບຄວາມມືດມົວຂອງຈິດໃຈນຳອີກ, ຊຶ່ງລາວພາໃຫ້ເກີດຂຶ້ນໃນບັນດາຜູ້ຄົນໂດຍການຕົວະຍົວະຂອງລາວ; ແລະ ຈິດວິນຍານຂອງລາວເລີ່ມ [ກ]ທໍລະມານພາຍໃຕ້ [ຂ]ການສຳນຶກໃນຄວາມຜິດຂອງຕົນເອງ; ແທ້ຈິງແລ້ວ, ລາວເລີ່ມຖືກລ້ອມໄວ້ດ້ວຍຄວາມເຈັບປວດຂອງນະລົກ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວເລີ່ມຮ້ອງຂໍຕໍ່ຜູ້ຄົນ, ມີຄວາມວ່າ: ຈົ່ງເບິ່ງຂ້າພະເຈົ້າເປັນ [ກ]ຄົນຜິດ, ແລະ ພວກເພິ່ນບໍ່ມີມົນທິນຕໍ່ພຣະພັກຂອງພຣະເຈົ້າເລີຍ. ແລະ ລາວເລີ່ມແກ້ຄຳເວົ້າແທນພວກເພິ່ນນັບຕັ້ງແຕ່ເວລານັ້ນໄປ; ແຕ່ວ່າຄົນທັງຫລາຍໝິ່ນປະໝາດລາວ, ໂດຍກ່າວວ່າ: ເຈົ້າຖືກຜີເຂົ້າສິງແລ້ວບໍ? ແລະ ພວກເຂົາໄດ້ຖົ່ມນ້ຳລາຍໃສ່ລາວ, ແລະ [ຂ]ຂັບໄລ່ລາວອອກໄປຈາກບັນດາພວກເຂົາພ້ອມທັງທຸກຄົນທີ່ເຊື່ອໃນຄຳເວົ້າຂອງແອວມາກັບແອມມິວເລັກ; ແລະ ພວກເຂົາໄດ້ຂັບໄລ່ຄົນພວກນັ້ນອອກໄປ, ແລະ ໄດ້ສົ່ງຄົນໄປແກວ່ງກ້ອນຫີນໃສ່ພວກເຂົາ.

8 ແລະ ພວກເຂົາໄດ້ນຳເອົາເມຍ ແລະ ລູກໆຂອງພວກເຂົາມາໂຮມກັນ, ແລະ ຜູ້ໃດກໍຕາມທີ່ເຊື່ອຖື ຫລື ຖືກສິດສອນໃຫ້ເຊື່ອພຣະຄຳຂອງພຣະເຈົ້າ ພວກເຂົາກໍໃຫ້ໂຍນຄົນເຫລົ່ານັ້ນເຂົ້າກອງໄຟ; ແລະ ພວກເຂົາໄດ້ນຳເອົາບັນທຶກຂອງພວກເຂົາມາ, ຊຶ່ງປະກອບດ້ວຍພຣະຄຳພີສັກສິດ

**14** 1 *ກ* 2 ກສ 22:8–13.
ຄມພ ພຣະຄຳພີ.
2 *ກ* ແອວ 12:3–7.
*ຂ* ແອວ 10:27.
6 *ກ* ແອວ 15:5.
*ຂ* ຄມພ ສຳນຶກ,
ຄວາມສຳນຶກ.
7 *ກ* ແອວ 11:21–37.
*ຂ* ແອວ 15:1.

ແລະ ໂຍນມັນເຂົ້າໃນກອງໄຟນຳອີກ, ເພື່ອ
ມັນຈະໄດ້ໄໝ້ ແລະ ພິນາດໄປດ້ວຍໄຟ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ນຳເອົາແອວມາກັບແອມມິວເລັກ
ອອກໄປບ່ອນເຜົາຄົນທີ່ເຊື່ອຖື, ເພື່ອພວກ
ເພິ່ນຈະໄດ້ເຫັນຄວາມພິນາດຂອງຄົນ
ພວກນັ້ນທີ່ຖືກເຜົາດ້ວຍໄຟ.
10 ແລະ ເວລາທີ່ ແອມມິວເລັກເຫັນ
ຄວາມເຈັບປວດຂອງພວກແມ່ຍິງ ແລະ
ເດັກນ້ອຍທີ່ກຳລັງຖືກໄຟໄໝ້, ລາວກໍມີ
ຄວາມເຈັບປວດຫລາຍ; ແລະ ລາວໄດ້ເວົ້າ
ກັບແອວມາວ່າ: ພວກເຮົາຈະເບິ່ງພາບອັນ
ເປັນຕາຢ້ານນີ້ໄດ້ແນວໃດ? ສະນັ້ນ ຂໍໃຫ້
ພວກເຮົາເດ່ມືອອກໄປ ແລະ ໃຊ້ [ກ]ອຳນາດ
ຂອງພຣະເຈົ້າທີ່ຢູ່ໃນພວກເຮົາ, ແລະ
ຊ່ວຍເຫລືອພວກເຂົາໃຫ້ພົ້ນຈາກແປວໄຟ
ເສຍເຖີດ.
11 ແຕ່ ແອວມາ ກ່າວ ກັບ ແອມ ມິວເລັກ
ວ່າ: ພຣະວິນຍານໄດ້ກ່າວກັບຂ້າພະເຈົ້າ
ວ່າ ບໍ່ຕ້ອງເດ່ມືຂອງຂ້າພະເຈົ້າອອກໄປ;
ເພາະຈົ່ງເບິ່ງ ພຣະຜູ້ເປັນເຈົ້າໄດ້ຮັບເອົາ
ພວກເຂົາຂຶ້ນໄປຫາພຣະອົງແລ້ວໃນ [ກ]ລັດ
ສະໝີພາບ; ແລະ ພຣະອົງໄດ້ຍອມໃຫ້
ພວກເຂົາເຮັດສິ່ງເຫລົ່ານີ້ເພື່ອວ່າໃຫ້ຄົນ
ອື່ນໆເຮັດສິ່ງເຫລົ່ານີ້ກັບພວກເຂົາຕາມ
ຄວາມແຂງກະດ້າງຂອງໃຈຂອງພວກເຂົາ,
ເພື່ອ [ຂ]ການຕັດສິນຊຶ່ງພຣະອົງຈະໃຫ້ມີ
ກັບພວກເຂົາໃນພຣະພິໂລດຂອງພຣະອົງ
ຈະທ່ຽງທຳ; ແລະ [ຄ]ເລືອດຂອງ [ງ]ຜູ້ບໍລິສຸດ
ຈະຢືນເປັນພະຍານຟ້ອງພວກເຂົາ, ແທ້
ຈິງແລ້ວ, ພວກເຂົາຈະຮ້ອງຢ່າງສຸດກຳລັງ
ເພື່ອຟ້ອງພວກເຂົາໃນວັນສຸດທ້າຍ.
12 ແລະ ບັດນີ້ແອມມິວເລັກເວົ້າກັບ
ແອວມາວ່າ: ຈົ່ງເບິ່ງ, ບາງທີພວກເຂົາອາດ
ຈະເຜົາພວກເຮົາຄືກັນ.
13 ແລະ ແອວມາເວົ້າວ່າ: ຂໍໃຫ້ເປັນໄປ
ຕາມພຣະປະສົງຂອງພຣະຜູ້ເປັນເຈົ້າເຖີດ.
ແຕ່ຈົ່ງເບິ່ງ, ວຽກງານຂອງພວກເຮົາຍັງບໍ່
ທັນສຳເລັດເທື່ອ; ສະນັ້ນ ພວກເຂົາຈະບໍ່
ເຜົາພວກເຮົາດອກ.
14 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຮ່າງກາຍຂອງຜູ້ທີ່ຖືກໂຍນເຂົ້າໃນໄຟພ້ອມ
ທັງບັນທຶກ ຊຶ່ງຖືກເຂົ້າໄປພ້ອມກັບພວກ
ເຂົາຖືກໄຟໄໝ້ໝົດແລ້ວ, ຫົວໜ້າຜູ້ຕັດສິນ
ຂອງແຜ່ນດິນໄດ້ມາຢືນຢູ່ຕໍ່ໜ້າແອວມາ
ກັບແອມມິວເລັກ, ຂະນະທີ່ພວກເພິ່ນຖືກ
ມັດຢູ່; ແລະ ເພິ່ນໄດ້ຕົບໜ້າພວກເພິ່ນ
ດ້ວຍມືຂອງເພິ່ນ ແລະ ເວົ້າກັບພວກເພິ່ນ
ວ່າ: ຫລັງຈາກພວກເຈົ້າເຫັນສິ່ງນີ້ແລ້ວ,
ພວກເຈົ້າຍັງຈະສັ່ງສອນຜູ້ຄົນພວກນີ້ອີກ
ບໍ ຊຶ່ງພວກເຂົາຈະຖືກໂຍນເຂົ້າໄປໃນ
[ກ]ທະເລໄຟ ແລະ ມາດ?
15 ຈົ່ງເບິ່ງ, ພວກເຈົ້າເຫັນວ່າຕົນເອງບໍ່ມີ
ອຳນາດທີ່ຈະຊ່ວຍເຫລືອຜູ້ທີ່ຖືກໂຍນເຂົ້າ
ໄປໃນໄຟນັ້ນ; ທັງພຣະເຈົ້າກໍບໍ່ຊ່ວຍພວກ
ເຂົາທັງໆທີ່ພວກເຂົາມີສັດທາເໝືອນພວກ
ເຈົ້າ. ແລະ ຜູ້ຕັດສິນໄດ້ຕົບໜ້າພວກເພິ່ນ
ອີກ, ແລະ ຖາມວ່າ: ພວກເຈົ້າຈະເວົ້າແນວ
ໃດເພື່ອຕົວເອງ?
16 ແລະ ຜູ້ຕັດສິນຜູ້ນີ້ຢູ່ໃນລະບຽບ ແລະ
ສັດຊື່ຕໍ່ [ກ]ນີຮໍ, ຜູ້ຂ້າກີເດໂອນນັ້ນ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາກັບແອມມິວເລັກບໍ່ໄດ້ຕອບເພິ່ນ;
ແລະ ເພິ່ນໄດ້ຕົບໜ້າພວກເພິ່ນອີກ, ແລະ

10 *ກ* ແອວ 8:30–31.
11 *ກ* ຄມພ ລັດສະໝີພາບ.
*ຂ* ພສສ 37:8–13; ແອວ 60:13; ຄພ 103:3. ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຄ* ຄມພ ຕາຍເພາະ ຄວາມເຊື່ອ, ການຕາຍ ເພາະຄວາມເຊື່ອ.
*ງ* ມຊຢ 17:10.
14 *ກ* ແອວ 12:17.
16 *ກ* ແອວ 1:7–15.

ມອບພວກເພິ່ນໃຫ້ແກ່ເຈົ້າໜ້າທີ່ເພື່ອເອົາ
ໄປເຂົ້າຄຸກ.
18 ແລະ ເມື່ອພວກເພິ່ນໄດ້ຖືກສົ່ງເຂົ້າ
ຄຸກໄດ້ສາມມື້, [ກ]ພວກທະນາຍຄວາມ, ແລະ
ພວກ ຜູ້ ຕັດ ສິນ, ແລະ ພວກ ປະ ໂລ ຫິ ດ,
ແລະ ພວກຄູສອນຫລາຍຄົນ, ທີ່ມີວິຊາຊີບ
ດຽວກັນກັບນີຮໍ ໄດ້ເຂົ້າມາໃນຄຸກເພື່ອເບິ່ງ
ພວກເພິ່ນ; ແລະ ເຂົາເຈົ້າໄດ້ສອບຖາມ
ພວກເພິ່ນຫລາຍເລື່ອງແຕ່ພວກເພິ່ນບໍ່ໄດ້
ຕອບຫຍັງເລີຍ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຕັດສິນໄດ້ມາຢືນຢູ່ຕໍ່ໜ້າພວກເພິ່ນ, ແລະ
ຖາມວ່າ: ເປັນຫຍັງພວກເຈົ້າຈຶ່ງບໍ່ຕອບ
ຄຳຖາມຂອງຜູ້ຄົນພວກນີ້? ພວກເຈົ້າຮູ້ບໍ
ວ່າຂ້າພະເຈົ້າມີອຳນາດທີ່ຈະສົ່ງພວກເຈົ້າ
ໃຫ້ຖືກໂຍນເຂົ້າໄປໃນກອງໄຟໄດ້? ແລະ
ເພິ່ນໄດ້ສັ່ງໃຫ້ແອວມາກັບແອມມິວເລັກ
ເວົ້າ; ແຕ່ພວກເພິ່ນກໍບໍ່ໄດ້ເວົ້າຫຍັງເລີຍ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຂົາ
ເຈົ້າໄດ້ອອກໄປ ແລະ ໄປຕາມທາງຂອງ
ເຂົາເຈົ້າ, ແລະ ໄດ້ກັບຄືນມາອີກໃນມື້ຕໍ່
ມາ; ແລະ ຜູ້ຕັດສິນໄດ້ຕົບໜ້າພວກເພິ່ນ
ອີກ. ແລະ ຫລາຍຄົນໄດ້ອອກມາຄືກັນ,
ແລະ ຕົບໜ້າພວກເພິ່ນ, ແລະ ຖາມວ່າ:
ພວກເຈົ້າຈະຢືນຕັດສິນຜູ້ຄົນພວກນີ້ ແລະ
ກ່າວໂທດກົດໝາຍຂອງພວກເຮົາອີກບໍ?
ຖ້າຫາກພວກເຈົ້າມີອຳນາດອັນຍິ່ງໃຫຍ່
ເຊັ່ນນັ້ນ ແລ້ວເປັນຫຍັງຈຶ່ງບໍ່ຊ່ວຍຕົນເອງ
ໃຫ້ [ກ]ຫລຸດພົ້ນໄດ້?
21 ແລະ ເຂົາເຈົ້າໄດ້ເວົ້າຫລາຍເລື່ອງ
ໃນທຳນອງນີ້, ໂດຍທີ່ກັດແຂ້ວ, ແລະ ຖົ່ມ
ນ້ຳລາຍໃສ່ພວກເພິ່ນ, ແລະ ຖາມວ່າ:
ພວກເຮົາຈະເປັນແນວໃດເວລາພວກເຮົາ
ອັບປະໂຫຍດ?
22 ແລະ ເຂົາເຈົ້າໄດ້ເວົ້າຫລາຍເລື່ອງ
ໃນທຳນອງນີ້, ແທ້ຈິງແລ້ວ, ເຂົາເຈົ້າໄດ້
ເວົ້າກັບພວກເພິ່ນຕ່າງໆນາໆ; ແລະ ໄດ້
ເຍາະເຍີ້ຍພວກເພິ່ນຢູ່ແນວນັ້ນຕັ້ງຫລາຍ
ມື້, ແລະ ເຂົາເຈົ້າບໍ່ເອົາເຂົ້າເອົານ້ຳໃຫ້
ພວກເພິ່ນກິນ ເພື່ອພວກເພິ່ນຈະໄດ້ຫິວ
ເຂົ້າຫິວນ້ຳ; ແລະ ເຂົາເຈົ້າໄດ້ແກ້ເສື້ອຜ້າ
ຂອງພວກເພິ່ນອອກນຳອີກ ເພື່ອພວກເພິ່ນ
ຈະໄດ້ເປືອຍເປົ່າ; ແລະ ພວກເພິ່ນຖືກມັດ
ໄວ້ດ້ວຍເຊືອກທີ່ໜັ້ນ ແລະ ຖືກຂັງຢູ່ໃນ
ຄຸກ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກພວກເພິ່ນໄດ້ທົນທຸກທໍລະມານຢູ່
ຫລາຍມື້ແນວນັ້ນ, (ໃນວັນທີສິບສອງຂອງ
ເດືອນສິບ, ໃນປີທີສິບແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ) ຄືຫົວ
ໜ້າຜູ້ຕັດສິນດູແລແຜ່ນດິນອຳໂມນໄນຮາ
ແລະ ຜູ້ສອນ ແລະ ທະນາຍຄວາມຂອງ
ພວກເຂົາຫລາຍຄົນໄດ້ເຂົ້າໄປໃນຄຸກ ຊຶ່ງ
ແອວມາກັບແອມມິວເລັກໄດ້ຖືກມັດໄວ້
ດ້ວຍເຊືອກ.
24 ແລະ ຫົວໜ້າຜູ້ຕັດສິນໄດ້ມາຢືນຢູ່ຕໍ່
ໜ້າພວກເພິ່ນ ແລະ ຕົບໜ້າພວກເພິ່ນອີກ,
ແລະ ເວົ້າກັບພວກເພິ່ນວ່າ: ຖ້າຫາກພວກ
ເຈົ້າມີອຳນາດຂອງພຣະເຈົ້າ, ພວກເຈົ້າກໍ
ຄວນຊ່ວຍຕົນເອງໃຫ້ຫລຸດພົ້ນອອກຈາກ
ເຊືອກມັດເຫລົ່ານີ້ແມ, ເມື່ອນັ້ນພວກເຮົາ
ຈຶ່ງຈະເຊື່ອວ່າ ພຣະຜູ້ເປັນເຈົ້າຈະທຳລາຍ
ຜູ້ຄົນພວກນີ້ຕາມຄຳເວົ້າຂອງພວກເຈົ້າ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຂົາ
ເຈົ້າທັງໝົດໄດ້ເຂົ້າໄປຕົບໜ້າພວກເພິ່ນ,
ໂດຍເວົ້າຄວາມດຽວກັນຈົນກະທັ້ງຜູ້ສຸດ
ທ້າຍ; ແລະ ເມື່ອຜູ້ສຸດທ້າຍໄດ້ເວົ້າກັບ
ພວກເພິ່ນແລ້ວ [ກ]ອຳນາດຂອງພຣະເຈົ້າໄດ້

18 *ກ* ແອວ 10:14; 11:20.
20 *ກ* ມທ 27:39–43.
25 *ກ* ແອວ 8:31.

ມາສະຖິດຢູ່ກັບແອວມາກັບແອມມິວເລັກ,
ແລະ ທັງສອງໄດ້ລຸກຢືນຂຶ້ນ.
26 ແລະ ແອວມາໄດ້ຮ້ອງຂຶ້ນ, ກ່າວ
ວ່າ: ໂອ້ ພຣະອົງເຈົ້າເອີຍ, ຈະໃຫ້ພວກ
ຂ້ານ້ອຍທົນຕໍ່ [ກ]ຄວາມທຸກທີ່ສາຫັດນີ້ໄປ
ອີກດົນປານໃດ? ໂອ້ ພຣະຜູ້ເປັນເຈົ້າ, ຈົ່ງ
ໂຜດປະທານກຳລັງໃຫ້ພວກຂ້ານ້ອຍຕາມ
ສັດທາຂອງພວກຂ້ານ້ອຍ ອັນມີຢູ່ໃນພຣະ
ຄຣິດ ຈົນເຖິງການປົດປ່ອຍດ້ວຍເທີ້ນ.
ແລະ ພວກເພິ່ນໄດ້ເຮັດໃຫ້ເຊືອກທີ່ມັດຢູ່
ນັ້ນຂາດອອກ; ແລະ ເວລາຜູ້ຄົນເຫັນເຊັ່ນ
ນັ້ນ, ກໍເລີ່ມປົບໜີເພາະຄວາມຢ້ານກົວວ່າ
ຄວາມພິນາດຈະເກີດຂຶ້ນກັບພວກເຂົາ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຄວາມຢ້ານກົວຂອງພວກເຂົານັ້ນໃຫຍ່
ຫລວງທີ່ສຸດ ຈົນວ່າພວກເຂົາໄດ້ລົ້ມລົງ
ຢູ່ກັບພື້ນດິນ, ແລະ ອອກໄປບໍ່ຮອດປະຕູ
ນອກ [ກ]ຄຸກຊໍ້າ; ແລະ ເກີດແຜ່ນດິນໄຫວ
ຢ່າງໜັກ ແລະ ກຳແພງຄຸກໄດ້ແຍກອອກ
ເປັນສອງ, ເຮັດໃຫ້ມັນພັງລົງຢູ່ກັບພື້ນ
ດິນ; ແລະ ຫົວໜ້າຕັດສິນ, ພວກທະນາຍ
ຄວາມ, ພວກປະໂລຫິດ, ແລະ ພວກຄູ
ສອນທີ່ຕົບໜ້າແອວມາກັບແອມມິວເລັກ
ໄດ້ຕາຍໄປເພາະຖືກທັບທັບ.
28 ແລະ ແອວມາກັບແອມມິວເລັກໄດ້
ອອກມາຈາກຄຸກ, ແລະ ພວກເພິ່ນບໍ່ໄດ້
ຮັບບາດເຈັບຫຍັງເລີຍ; ເພາະພຣະຜູ້
ເປັນເຈົ້າໄດ້ປະທານອຳນາດໃຫ້ແກ່ພວກ
ເພິ່ນ, ຕາມສັດທາຂອງພວກເພິ່ນທີ່ມີຢູ່ໃນ
ພຣະຄຣິດ. ແລະ ພວກເພິ່ນໄດ້ຍ່າງອອກ
ຈາກຄຸກຢ່າງສະບາຍ; ແລະ ເຊືອກມັດໄດ້
[ກ]ຫລຸດອອກຈາກພວກເພິ່ນ; ແລະ ຄຸກໄດ້
ຍຸບລົງກັບພື້ນດິນ, ແລະ ທຸກຄົນຢູ່ພາຍໃນ
ກຳແພງຄຸກໄດ້ຖືກຂ້າຕາຍໝົດ, ນອກຈາກ
ແອວມາກັບແອມມິວເລັກເທົ່ານັ້ນ; ແລະ
ພວກເພິ່ນໄດ້ຍ່າງມຸ້ງໜ້າເຂົ້າໄປໃນເມືອງ.
29 ບັດນີ້ຝູງຊົນໂດຍທີ່ໄດ້ຍິນສຽງກຶກ
ກ້ອງອັນໃຫຍ່ຫລວງກໍຟ້າວແລ່ນມາເຕົ້າ
ໂຮມກັນເພື່ອຢາກຮູ້ຈັກສາເຫດຂອງມັນ;
ແລະ ເວລາພວກເຂົາເຫັນແອວມາກັບ
ແອມມິວເລັກຍ່າງອອກຈາກຄຸກ ແລະ ກຳ
ແພງຄຸກພັງລົງຢູ່ກັບພື້ນດິນ, ພວກເຂົາກໍ
ຖືກຄອບງຳດ້ວຍຄວາມຢ້ານກົວຢ່າງໃຫຍ່
ຫລວງ ແລະ ປົບໜີໄປຕໍ່ໜ້າແອວມາກັບ
ແອມມິວເລັກ ຄືກັນກັບແມ່ແບ້ກັບລູກອ່ອນ
ຂອງມັນ ຫລົບໜີຈາກສິງສອງໂຕ; ແລະ
ພວກເຂົາໄດ້ໜີໄປຕໍ່ໜ້າແອວມາກັບແອມ
ມິວເລັກແບບນັ້ນ.

## ບົດທີ 15

*ແອວມາກັບແອມມິວເລັກໄປຫາເມືອງໄຊ
ດຳ ແລະ ໄດ້ສະຖາປະນາສາດສະໜາຈັກ
ຂຶ້ນ—ແອວມາໄດ້ປິ່ນປົວຊີເອສຣອມຜູ້ໄດ້
ເຂົ້າຮ່ວມສາດສະໜາຈັກ—ຫລາຍຄົນໄດ້
ຮັບບັບຕິສະມາ, ແລະ ສາດສະໜາຈັກກໍ
ຈະເລີນຮຸ່ງເຮືອງຂຶ້ນ—ແອວມາກັບແອມ
ມິວເລັກໄດ້ກັບໄປຫາເຊຣາເຮັມລາ. ປະ
ມານ 81 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາກັບແອມມິວເລັກໄດ້ຮັບພຣະບັນ
ຊາໃຫ້ອອກຈາກເມືອງນັ້ນ ແລະ ພວກເພິ່ນ
ໄດ້ອອກໄປ ແລະ ມາແວ່ແຜ່ນດິນໄຊດຳ;
ແລະ ຈົ່ງເບິ່ງ, ບ່ອນນັ້ນພວກເພິ່ນໄດ້ເຫັນຜູ້
ຄົນທັງໝົດທີ່ອອກຈາກແຜ່ນດິນ [ກ]ອຳໂມນ
ໄນຮາ, ຊຶ່ງພວກເຂົາຖືກ [ຂ]ຂັບໄລ່ໜີ ແລະ

26 *ກ* ຢກບ 5:10–11; ມຊຢ 17:10–20; ຄພ 121:7–8.
27 *ກ* ກຈກ 16:26; ອທ 12:13.
28 *ກ* ຢຄ 4:6; 3 ນຟ 28:19–22.
**15** 1 *ກ* ແອວ 16:2–3, 9, 11. *ຂ* ແອວ 14:7.

ຖືກ ແກວ່ງ ກ້ອນ ຫີນ ໃສ່, ເພາະ ພວກ ເຂົາ
ເຊື່ອໃນຄຳເວົ້າຂອງແອວມາ.
2 ແ ລ ະ ພ ວກ ເພິ່ນໄດ້ ເລົ່າ ໃຫ້ ພວກ
ເຂົາຟັງ ເຖິງເລື່ອງ ທັງໝົດທີ່ໄດ້ ເກີດຂຶ້ນ
ກັບ [ກ]ເມຍ ແລະ ລູກຂອງພວກເຂົາ, ແລະ
ເລື່ອງທີ່ໄດ້ເກີດຂຶ້ນກັບຕົວພວກເພິ່ນເອງ
ນຳອີກ ແລະ ເຖິງ [ຂ]ອຳນາດແຫ່ງການປົດ
ປ່ອຍຂອງພວກເພິ່ນ.
3 ແລະ ຊີເອສຣອມໄດ້ນອນໄຂ້ຢູ່ທີ່ໄຊ
ດຳ ດ້ວຍ ໄຂ້ ຄີງ ຮ້ອນ, ຊຶ່ງ ເກີດຂຶ້ນ ເພາະ
ຄວາມຍາກລຳບາກທີ່ສຸດໃນຈິດໃຈຂອງ
ລາວ ເນື່ອງ ຈາກ [ກ]ຄວາມຊົ່ວຮ້າຍ ຂອງ
ລາວເອງ, ເພາະລາວຄິດວ່າ ແອວມາກັບ
ແອມນິວເລັກໄດ້ຕາຍໄປແລ້ວ; ແລະ ຄິດ
ວ່າພວກເພິ່ນຖືກຂ້າຕາຍ ເພາະຄວາມຊົ່ວ
ຮ້າຍຂອງລາວ. ແລະ ບາບອັນໃຫຍ່ຫລວງ
ນີ້ກັບບາບອື່ນໆຫລາຍຢ່າງຂອງລາວໄດ້
ທໍລະມານຈິດໃຈຂອງລາວຈົນກາຍເປັນ
ຄວາມເຈັບປວດຢ່າງໜັກທີ່ປິ່ນປົວບໍ່ໄດ້;
ສະນັ້ນ ລາວຈຶ່ງຮ້ອນຮົນດ້ວຍຄວາມຮ້ອນ
ທີ່ລຸກເປັນໄຟ.
4 ບັດນີ້, ເວລາລາວໄດ້ຍິນວ່າ ແອວມາ
ກັບແອມນິວເລັກຢູ່ໃນແຜ່ນດິນໄຊດຳ, ໃຈ
ຂອງລາວເລີ່ມມີກຳລັງຂຶ້ນ; ແລະ ລາວໄດ້
ສົ່ງຂ່າວໄປຫາພວກເພິ່ນທັນທີ ໂດຍປາດ
ຖະໜາໃຫ້ພວກເພິ່ນມາຫາລາວ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເພິ່ນໄດ້ໄປທັນທີໂດຍເຊື່ອໃນຂ່າວທີ່ພວກ
ເພິ່ນໄດ້ຮັບ; ແລະ ພວກເພິ່ນໄດ້ເຂົ້າໄປໃນ
ເຮືອນຫາຊີເອສຣອມ; ແລະ ໄດ້ພົບລາວ
ກຳລັງນອນຢູ່ເທິງຕຽງ, ເຈັບປ່ວຍຢູ່, ລາວ
ໄດ້ລົດກຳລັງດ້ວຍໄຂ້ຄີງຮ້ອນ; ແລະ ຈິດ
ໃຈຂອງລາວເຈັບປວດທີ່ສຸດຍ້ອນຄວາມ
ຊົ່ວຮ້າຍຂອງຕົນເອງ; ແລະ ເມື່ອລາວເຫັນ
ພວກເພິ່ນ ລາວໄດ້ເດ່ມືອອກໄປ ແລະ ວິງ
ວອນພວກເພິ່ນໃຫ້ປິ່ນປົວລາວ.
6 ແລະ ເຫດ ການ ໄດ້ບັງເກີດຂຶ້ນຄື
ແອວມາໄດ້ຈັບມືລາວ, ແລະ ຖາມວ່າ: ເຈົ້າ
[ກ]ເຊື່ອໃນອຳນາດຂອງພຣະຄຣິດອັນຈະນຳ
ໄປສູ່ຄວາມລອດບໍ່?
7 ແລະ ລາວຕອບ ແລະ ເວົ້າວ່າ: ແທ້ຈິງ
ແລ້ວ, ຂ້ານ້ອຍເຊື່ອຖືໃນຄຳເວົ້າທັງໝົດທີ່
ທ່ານໄດ້ສິດສອນ.
8 ແລະ ແອວມາເວົ້າວ່າ: ຖ້າຫາກເຈົ້າ
ເຊື່ອໃນການໄຖ່ຂອງພຣະຄຣິດ ເຈົ້າກໍຈະ
[ກ]ຫາຍດີໄດ້.
9 ແລະ ລາວເວົ້າວ່າ: ແທ້ຈິງແລ້ວ, ຂ້າ
ນ້ອຍເຊື່ອໃນຄຳເວົ້າຂອງພວກທ່ານ.
10 ແລະ ຈາກນັ້ນແອວມາຈຶ່ງຮ້ອງທູນຕໍ່
ພຣະຜູ້ເປັນເຈົ້າ, ກ່າວວ່າ: ໂອ້ ພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງພວກຂ້ານ້ອຍ,
ຈົ່ງມີເມດຕາຕໍ່ຄົນຜູ້ນີ້ດ້ວຍເຖີດ, ແລະ ຈົ່ງ
[ກ]ປິ່ນປົວລາວຕາມສັດທາຂອງລາວທີ່ມີຕໍ່
ພຣະຄຣິດ.
11 ແລະ ເມື່ອ ແອວມາ ເວົ້າ ຂໍ້ ຄວາມ ນີ້
ແລ້ວ, ຊີເອສຣອມກໍ [ກ]ຜູດລຸກຂຶ້ນ, ແລະ
ເລີ່ມຍ່າງໄປ; ແລະ ເລື່ອງນີ້ເຮັດໃຫ້ເປັນທີ່
ແປກປະຫລາດໃຈຢ່າງໃຫຍ່ຫລວງແກ່ຜູ້
ຄົນທັງປວງ; ແລະ ຄວາມຮູ້ກ່ຽວກັບເລື່ອງ
ນີ້ໄດ້ແຜ່ຂະຫຍາຍໄປທົ່ວແຜ່ນດິນໄຊດຳ.
12 ແລະ ແອວມາໄດ້ໃຫ້ບັບຕິສະມາແກ່
ຊີເອສຣອມໄວ້ກັບພຣະຜູ້ເປັນເຈົ້າ; ແລະ
ນັບແຕ່ເວລານັ້ນໄປ ລາວໄດ້ເລີ່ມສັ່ງສອນ
ຜູ້ຄົນ.
13 ແລະ ແອວມາໄດ້ສະຖາປະນາສາດ
ສະໜາຈັກຂຶ້ນໃນແຜ່ນດິນໄຊດຳ, ແລະ

2 *ກ* ແອວ 14:8–14.
*ຂ* ແອວ 14:28.
3 *ກ* ແອວ 14:6–7.
6 *ກ* ມຣກ 9:23.
8 *ກ* ຄມພ ປິ່ນປົວ, ການປິ່ນປົວ.
10 *ກ* ມຣກ 2:1–12.
11 *ກ* ກຈກ 3:1–11.

ໄດ້ແຕ່ງຕັ້ງປະໂລຫິດ ແລະ ຄູສອນໄວ້ໃນ
ແຜ່ນດິນ, ເພື່ອໃຫ້ບັບຕິສະມາຜູ້ໃດກໍຕາມ
ທີ່ປາດຖະໜາຈະຮັບບັບຕິສະມາໄວ້ກັບ
ພຣະຜູ້ເປັນເຈົ້າ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ໄດ້
ມີຫລາຍຄົນ; ເພາະພວກເຂົາໄດ້ມາຈາກ
ທຸກພາກພື້ນໂດຍອ້ອມຮອບເມືອງໄຊດຳ,
ແລະ ໄດ້ຮັບບັບຕິສະມາ.
15 ແຕ່ສຳລັບຜູ້ທີ່ຢູ່ໃນແຜ່ນດິນອຳໂມນ
ໄນຮານັ້ນ, ພວກເຂົາຍັງເປັນຜູ້ຄົນທີ່ມີໃຈ
ແຂງກະດ້າງ ແລະ ແຂງຄໍຢູ່; ແລະ ພວກ
ເຂົາບໍ່ໄດ້ກັບໃຈເລີຍຈາກບາບຂອງພວກ
ເຂົາ, ອ້າງວ່າອຳນາດທັງໝົດຂອງແອວມາ
ກັບແອມມິວເລັກມາຈາກມານ; ເພາະວ່າ
ພວກມີວິຊາຊີບດຽວກັນກັບ [ກ]ນີຮໍບໍ່ເຊື່ອຖື
ໃນການກັບໃຈຈາກບາບຂອງພວກເຂົາ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ສ່ວນແອວມາກັບແອມມິວເລັກນັ້ນ, ໂດຍ
ທີ່ແອມມິວເລັກໄດ້ [ກ]ປະຖິ້ມຄຳຂອງລາວ,
ແລະ ເງິນ, ແລະ ສິ່ງທີ່ມີຄ່າທັງໝົດຂອງ
ລາວຢູ່ໃນແຜ່ນດິນອຳໂມນໄນຮາເພື່ອ
ພຣະຄຳຂອງພຣະເຈົ້າ, ໂດຍທີ່ລາວຖືກ
[ຂ]ປະຕິເສດໂດຍຜູ້ທີ່ເປັນໝູ່ເພື່ອນ ແລະ
ໂດຍບິດາຂອງລາວ ແລະ ໂດຍຍາດພີ່
ນ້ອງຂອງລາວ;
17 ສະນັ້ນ, ຫລັງຈາກແອວມາໄດ້ສະຖາ
ປະນາສາດສະໜາຈັກຂຶ້ນທີ່ໄຊດຳແລ້ວ,
ໂດຍທີ່ເຫັນ [ກ]ການຍົກເລີກອັນໃຫຍ່ຫລວງ,
ແທ້ຈິງແລ້ວ, ເຫັນຜູ້ຄົນຍົກເລີກຄວາມ
ທະນົງໃຈ, ແລະ ເລີ່ມ [ຂ]ຖ່ອມຕົວຕໍ່ພຣະພັກ
ຂອງພຣະເຈົ້າ, ແລະ ເລີ່ມມາຊຸມນຸມກັນຢູ່
ບ່ອນລີ້ໄພຂອງພວກເຂົາ ເພື່ອ [ຄ]ນະມັດ
ສະການພຣະເຈົ້າຕໍ່ໜ້າແທ່ນບູຊາ, [ງ]ເບິ່ງ
ແລະ ອະທິຖານຢ່າງສະໝ່ຳສະເໝີ, ເພື່ອ
ພວກເຂົາຈະໄດ້ລອດພົ້ນຈາກຊາຕານ,
ແລະ ຈາກ [ຈ]ຄວາມຕາຍ, ແລະ ຈາກຄວາມ
ພິນາດ—
18 ບັດນີ້ຄືກັນກັບຂ້າພະເຈົ້າໄດ້ເວົ້າໄວ້,
ໂດຍທີ່ແອວມາເຫັນສິ່ງເຫລົ່ານີ້ທັງໝົດ
ແລ້ວ, ສະນັ້ນ ເພິ່ນຈຶ່ງພາແອມມິວເລັກ
ຂ້າມມາຫາແຜ່ນດິນເຊຣາເຮັມລາ, ແລະ
ພາລາວໄປເຮືອນຂອງຕົນ, ແລະ ໄດ້ປະ
ຕິບັດກັບລາວໃນຄວາມຍາກລຳບາກຂອງ
ລາວ, ແລະ ເຮັດໃຫ້ລາວເຂັ້ມແຂງຂຶ້ນໃນ
ພຣະຜູ້ເປັນເຈົ້າ.
19 ແລະ ປີທີສິບຂອງການປົກຄອງຂອງ
ຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດ
ລົງດັ່ງນີ້.

## ບົດທີ 16

*ຊາວເລມັນທຳລາຍຜູ້ຄົນຂອງອຳໂມນ ໄນຮາ—ໂຊຣຳນຳພາຊາວນີໄຟເພື່ອເອົາ ໄຊຊະນະຊາວເລມັນ—ແອວມາກັບແອມ ມິວເລັກ ແລະ ຜູ້ອື່ນໆສັ່ງສອນພຣະຄຳ— ພວກເພິ່ນສິດສອນວ່າ ຫລັງຈາກການຟື້ນ ຄືນພຣະຊົນຂອງພຣະອົງແລ້ວ ພຣະຄຣິດ ຈະມາປະກົດຕໍ່ຊາວນີໄຟ. ປະມານ 81–77 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນດູ
ແລຜູ້ຄົນຂອງນີໄຟໃນວັນທີຫ້າຂອງເດືອນ

15 *ກ* ແອວ 1:2–15.
16 *ກ* ລກ 14:33; ແອວ 10:4.
*ຂ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
17 *ກ* ແອວ 16:21.
*ຂ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຄ* ຄມພ ນະມັດສະການ.
*ງ* ຄມພ ຍາມ, ຄົນຍາມ; ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຈ* ຄມພ ຄວາມຕາຍທາງວິນຍານ.

ສອງ, ມັນມີສັນຕິສຸກທີ່ສຸດຢູ່ໃນແຜ່ນດິນ
ເຊຣາເຮັມລາ, ບໍ່ມີສົງຄາມ ແລະ ການຂັດ
ແຍ້ງກັນຕັ້ງຫລາຍປີຈົນເຖິງວັນທີຫ້າຂອງ
ເດືອນສອງ, ໃນປີທີສິບເອັດຈຶ່ງມີສຽງຮ້ອງ
ປ່າວເລື່ອງສົງຄາມທີ່ໄດ້ຍິນໄປທົ່ວແຜ່ນ
ດິນ.
2 ເພາະ ຈົ່ງ ເບິ່ງ, ກອງ ທັບ ຂອງ ຊາວ
ເລມັນໄດ້ຍົກເຂົ້າມາທາງດ້ານຖິ່ນແຫ້ງ
ແລ້ງກັນດານໃນຊາຍແດນຂອງແຜ່ນດິນ,
ຈົນກະທັ້ງເຂົ້າໄປໃນເມືອງ [ກ]ອຳໂມນໄນ
ຮາ, ແລະ ເລີ່ມຂ້າຜູ້ຄົນ ແລະ ທຳລາຍຕົວ
ເມືອງ.
3 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ,
ກ່ອນທີ່ຊາວນີໄຟຈະລວມກຳລັງທະຫານ
ໃຫ້ພຽງພໍທີ່ຈະຂັບໄລ່ພວກສັດຕູອອກຈາກ
ແຜ່ນດິນໄປ, ພວກສັດຕູກໍໄດ້ [ກ]ທຳລາຍຜູ້
ຄົນທີ່ຢູ່ໃນເມືອງອຳໂມນໄນຮາກ່ອນແລ້ວ,
ແລະ ໄດ້ທຳລາຍບາງຄົນທີ່ຢູ່ຮອບຊາຍ
ແດນໂນອານຳອີກ, ແລະ ໄດ້ຈັບຄົນອື່ນໆ
ໄປເປັນຊະເລີຍເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ.
4 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຊາວ
ນີໄຟປາດຖະໜາຈະໄດ້ຄົນຜູ້ທີ່ຖືກຈັບໄປ
ເປັນຊະເລີຍໃນຖິ່ນແຫ້ງແລ້ງກັນດານຂອງ
ພວກເຂົາກັບຄືນມາ.
5 ສະນັ້ນ, ຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນຫົວ
ໜ້ານາຍທະຫານເບິ່ງແຍງກອງທັບຊາວ
ນີໄຟ, (ແລະ ຊື່ລາວວ່າ ໂຊຣຳ, ແລະ ລາວ
ມີລູກຊາຍສອງຄົນ, ລີໄຮ ແລະ ເອຮາ)—
ບັດນີ້ໂຊຣຳກັບລູກຊາຍທັງສອງຂອງລາວ
ຮູ້ຈັກວ່າ ແອວມາເປັນມະຫາປະໂລຫິດດູ
ແລສາດສະໜາຈັກ, ແລະ ໂດຍທີ່ໄດ້ຍິນ
ວ່າ ເພິ່ນມີວິນຍານແຫ່ງການທຳນາຍຢູ່
ນຳ, ສະນັ້ນ ເຂົາເຈົ້າຈຶ່ງໄດ້ໄປຫາເພິ່ນໂດຍ
ປາດຖະໜາຈະໄດ້ຮູ້ວ່າ ພຣະຜູ້ເປັນເຈົ້າ
ຈະພໍພຣະໄທຫລືບໍ່ ທີ່ເຂົາເຈົ້າຈະເຂົ້າໄປ
ໃນຖິ່ນແຫ້ງແລ້ງກັນດານເພື່ອຊອກຫາພີ່
ນ້ອງຂອງເຂົາເຈົ້າ, ຜູ້ທີ່ຖືກຊາວເລມັນຈັບ
ໄປເປັນຊະເລີຍນັ້ນ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາໄດ້ [ກ]ທູນຖາມພຣະຜູ້ເປັນເຈົ້າກ່ຽວ
ກັບເລື່ອງນີ້. ແລະ ແອວມາກັບຄືນມາ ແລະ
ເວົ້າກັບເຂົາເຈົ້າວ່າ: ຈົ່ງເບິ່ງ, ຊາວເລມັນ
ຈະຂ້າມແມ່ນ້ຳຊີໂດນທາງດ້ານໃຕ້ຂອງ
ຖິ່ນແຫ້ງແລ້ງກັນດານ, ຖັດຂຶ້ນໄປທາງ
ຊາຍແດນຂອງແຜ່ນດິນແມນທາຍ. ແລະ
ຈົ່ງເບິ່ງ, ບ່ອນນັ້ນພວກເຈົ້າຈະເຫັນພວກ
ເຂົາທາງຕາເວັນອອກຂອງແມ່ນ້ຳຊີໂດນ,
ແລະ ບ່ອນນັ້ນພຣະຜູ້ເປັນເຈົ້າຈະປົດປ່ອຍ
ພີ່ນ້ອງຂອງພວກເຈົ້າ ຊຶ່ງຖືກຊາວເລມັນ
ຈັບໄປເປັນຊະເລີຍ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂຊຣຳກັບລູກຊາຍຂອງລາວໄດ້ຂ້າມແມ່
ນ້ຳຊີໂດນໄປພ້ອມກັບກອງທັບທະຫານ
ຂອງລາວ, ແລະ ເດີນທັບກາຍຊາຍແດນ
ແມນທາຍໄປໃນຖິ່ນແຫ້ງແລ້ງກັນດານ
ທາງດ້ານໃຕ້ ຊຶ່ງຢູ່ທາງຕາເວັນອອກຂອງ
ແມ່ນ້ຳຊີໂດນ.
8 ແລະ ພວກເຂົາໄດ້ເຂົ້າໂຈມຕີກອງທັບ
ຊາວເລມັນ, ແລະ ຊາວເລມັນໄດ້ກະຈັດ
ກະຈາຍໄປ ແລະ ຖືກຂັບໄລ່ເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານ; ແລະ ພວກເຂົາຈຶ່ງໄດ້
ເອົາພີ່ນ້ອງຂອງພວກເຂົາທີ່ຖືກຊາວເລມັນ
ຈັບໄປເປັນຊະເລີຍນັ້ນຄືນມາ, ແລະ ບໍ່ມີ
ຜູ້ໃດຫາຍສາບສູນໄປເລີຍສຳລັບຜູ້ທີ່ຖືກ
ຈັບໄປເປັນຊະເລີຍນັ້ນ. ແລະ ພີ່ນ້ອງຂອງ
ພວກເຂົາກໍໄດ້ພາພວກເຂົາກັບຄືນໄປຫາ
ແຜ່ນດິນຂອງພວກເຂົາຕາມເດີມ.

**16** 2*ກ* ແອວ 15:1, 15–16. | 3*ກ* ແອວ 9:18. | 6*ກ* ແອວ 43:23–24.

9 ແລະ ປີທີສິບເອັດຂອງຜູ້ຕັດສິນໄດ້
ສິ້ນສຸດລົງດັ່ງນີ້, ໂດຍທີ່ຊາວເລມັນຖືກຂັບ
ໄລ່ອອກຈາກແຜ່ນດິນ, ແລະ ຜູ້ຄົນຂອງ
ອຳໂມນໄນຮາຖືກ [ກ]ທຳລາຍ; ແທ້ຈິງແລ້ວ,
ຊາວອຳໂມນໄນຮາທຸກຄົນທີ່ມີຊີວິດຢູ່ຖືກ
[ຂ]ທຳລາຍໝົດ, ພ້ອມທັງເມືອງໃຫຍ່ຂອງ
ພວກເຂົານຳອີກ, ຊຶ່ງພວກເຂົາໄດ້ເວົ້າວ່າ
ພຣະເຈົ້າຈະທຳລາຍບໍ່ໄດ້, ເພາະຄວາມຍິ່ງ
ໃຫຍ່ຂອງມັນ.
10 ແຕ່ຈົ່ງເບິ່ງ, ໃນມື້ [ກ]ດຽວເທົ່ານັ້ນກໍ
ເຫລືອພຽງແຕ່ຄວາມວ່າງເປົ່າ; ແລະ ຊາກ
ສົບຖືກໝາ ແລະ ສັດປ່າໃນຖິ່ນແຫ້ງແລ້ງ
ກັນດານສີກກິນ.
11 ເຖິງຢ່າງໃດກໍຕາມ, ຕໍ່ມາຫລາຍມື້
ຊາກສົບຂອງພວກເຂົາຍັງກອງກັນຢູ່ໃນ
ພື້ນແຜ່ນດິນໂລກນັ້ນ, ແລະ ຖືກປົກຄຸມໄປ
ດ້ວຍສິ່ງຂອງບາງໆ ແລະ ກິ່ນຂອງມັນຮຸນ
ແຮງທີ່ສຸດຈົນວ່າຜູ້ຄົນບໍ່ສາມາດເຂົ້າໄປ
ເປັນເຈົ້າຂອງແຜ່ນດິນອຳໂມນໄນຮາເປັນ
ເວລາຫລາຍປີ. ມັນຈຶ່ງມີຊື່ວ່າແຜ່ນດິນຮ້າງ
ຂອງຊາວນີຮໍ; ເພາະວ່າຄົນພວກນັ້ນມີອາ
ຊີບດຽວກັນກັບ [ກ]ນີຮໍຜູ້ຖືກຂ້າຕາຍ ແລະ
ແຜ່ນດິນຂອງພວກເຂົາໄດ້ຮ້າງເປົ່າ.
12 ແລະ ຊາວເລມັນບໍ່ໄດ້ມາກໍ່ສົງຄາມ
ກັບຊາວນີໄຟອີກຈົນເຖິງປີທີສິບສີ່ແຫ່ງ
ການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງ
ນີໄຟ. ແລະ ຜູ້ຄົນຂອງນີໄຟມີສັນຕິສຸກຕິດ
ຕໍ່ກັນທົ່ວແຜ່ນດິນເປັນເວລາສາມປີດັ່ງນີ້.
13 ແລະ ແອວມາກັບແອມມິວເລັກໄດ້
ອອກໄປສັ່ງສອນເລື່ອງການກັບໃຈໃຫ້ແກ່
ຜູ້ຄົນໃນ [ກ]ພຣະວິຫານ, ແລະ ໃນບ່ອນລີ້
ໄພ, ແລະ ໃນ [ຂ]ທຳມະສາລາຂອງພວກ
ເຂົານຳອີກ, ຊຶ່ງຖືກສ້າງໄວ້ຕາມແບບຂອງ
ຊາວຢິວ.
14 ແລະ ຫລາຍຕໍ່ຫລາຍຄົນທີ່ຍອມຟັງ
ຄຳເວົ້າຂອງພວກເພິ່ນ, ພວກເພິ່ນກໍໄດ້ໃຫ້
ພຣະຄຳຂອງພຣະເຈົ້າແກ່ພວກເຂົາຕໍ່ໄປ
ໂດຍ [ກ]ບໍ່ເຫັນແກ່ຜູ້ໃດຜູ້ໜຶ່ງ.
15 ແລະ ແອວມາກັບແອມມິວເລັກ ແລະ
ຄົນອີກຫລາຍຄົນທີ່ໄດ້ຮັບເລືອກເພື່ອເຮັດ
ວຽກງານ ໄດ້ອອກໄປດັ່ງນັ້ນ ເພື່ອສັ່ງສອນ
ພຣະຄຳທົ່ວແຜ່ນດິນ. ແລະ ການສະຖາ
ປະນາສາດສະໜາຈັກຈຶ່ງກວ້າງຂວາງທົ່ວ
ແຜ່ນດິນທຸກພາກພື້ນໂດຍອ້ອມຮອບ, ໃນ
ບັນດາຜູ້ຄົນທັງໝົດຂອງຊາວນີໄຟ.
16 ແລະ [ກ]ບໍ່ມີຄວາມບໍ່ສະເໝີພາບໃນ
ບັນດາພວກເຂົາ; ພຣະຜູ້ເປັນເຈົ້າໄດ້ຖອກ
ເທພຣະວິນຍານຂອງພຣະອົງລົງມາທົ່ວ
ແຜ່ນດິນເພື່ອຕຽມຈິດໃຈຂອງລູກຫລານ
ມະນຸດ, ຫລື ເພື່ອຕຽມ [ຂ]ໃຈຂອງພວກເຂົາ
ເພື່ອຮັບພຣະຄຳ ຊຶ່ງຈະສິດສອນໃນບັນດາ
ພວກເຂົາໃນເວລາແຫ່ງການສະເດັດມາ
ຂອງພຣະອົງ—
17 ເພື່ອພວກເຂົາຈະບໍ່ໄດ້ດື້ດ້ານຕໍ່ພຣະ
ຄຳ, ເພື່ອພວກເຂົາຈະບໍ່ໄດ້ເປັນຄົນທີ່ບໍ່
ເຊື່ອຖື, ແລະ ໄປຫາຄວາມພິນາດ, ແຕ່ເພື່ອ
ພວກເຂົາຈະໄດ້ຮັບພຣະຄຳດ້ວຍຄວາມປິ
ຕິຍິນດີ, ແລະ ຄືກັນກັບ [ກ]ກິ່ງງ່າທີ່ຖືກຕໍ່ເຂົ້າ
ກັບ [ຂ]ແນວອະງຸ່ນແທ້ ເພື່ອພວກເຂົາຈະໄດ້
ເຂົ້າໄປໃນ [ຄ]ທີ່ພັກຂອງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຂົາ.
18 ບັດນີ້ [ກ]ພວກປະໂລຫິດເຫລົ່ານັ້ນ ຊຶ່ງ

9 ກ ແອວ 8:16; 9:18–24; ມມ 6:15–22.
ຂ ແອວ 25:1–2.
10 ກ ແອວ 9:4.
11 ກ ແອວ 1:15; 24:28–30.
13 ກ 2 ນຟ 5:16.
ຂ ແອວ 21:4–6, 20.
14 ກ ແອວ 1:30.
16 ກ ມຊຢ 18:19–29; 4 ນຟ 1:3.
ຂ ຄມພ ຫົວໃຈທີ່ຊອກຊ້ຳ.
17 ກ ຢຄ 5:24.
ຂ ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
ຄ ແອວ 12:37; 13:10–13.
18 ກ ແອວ 15:13.

ໄດ້ອອກໄປໃນບັນດາຜູ້ຄົນ ໄດ້ສັ່ງສອນ
ໂທດຂອງການ ເວົ້າຕົວະ, ແລະ [ຂ]ການ
ຫລອກລວງ, ແລະ [ຄ]ການອິດສາບັງບຽດ,
ແລະ ການຜິດຖຽງກັນ, ແລະ ການມີເຈດ
ຕະນາຮ້າຍ, ແລະ ການໝິ່ນປະໝາດ,
ແລະ ການຂີ້ລັກມັກສົກ, ການໂຈນລະກຳ,
ການປຸ້ນຈີ້, ການຄາດຕະກຳ, ການຫລິ້ນ
ຊູ້, ແລະ ກິເລດຕັນຫາທຸກຢ່າງ, ໂດຍຮ້ອງ
ບອກວ່າ ສິ່ງເຫລົ່ານີ້ບໍ່ຄວນມີເລີຍ—
19 ໂດຍສິດສອນເຖິງສິ່ງຈະຕ້ອງມາເຖິງ
ໃນບໍ່ຊ້ານີ້; ແທ້ຈິງແລ້ວ, ໂດຍສິດສອນເຖິງ
[ກ]ການສະເດັດມາຂອງພຣະບຸດຂອງພຣະ
ເຈົ້າ, ການຮັບທຸກທໍລະມານ ແລະ ການສິ້ນ
ພຣະຊົນຂອງພຣະອົງ, ແລະ ການຟື້ນຄືນ
ຊີວິດຂອງຄົນຕາຍ.
20 ແລະ ຫລາຍຄົນໄດ້ສອບຖາມກ່ຽວ
ກັບສະຖານທີ່ ທີ່ພຣະບຸດຂອງພຣະເຈົ້າ
ຈະສະເດັດມາ; ແລະ ພວກເຂົາໄດ້ຖືກສິດ
ສອນວ່າ ພຣະອົງຈະ [ກ]ປະກົດຕໍ່ພວກເຂົາ
[ຂ]ຫລັງຈາກການຟື້ນຄືນພຣະຊົນຂອງພຣະ
ອົງ; ແລະ ສິ່ງນີ້ຜູ້ຄົນກໍໄດ້ຍິນດ້ວຍຄວາມ
ຊື່ນຊົມ ແລະ ດີໃຈຫລາຍທີ່ສຸດ.
21 ແລະບັດນີ້ຫລັງຈາກໄດ້ສະຖາປະນາ
ສາດສະໜາຈັກຂຶ້ນທົ່ວແຜ່ນດິນແລ້ວ—
ໂດຍມີ [ກ]ໄຊຊະນະເໜືອມານ, ແລະ ພຣະ
ຄຳຂອງພຣະເຈົ້າໄດ້ຖືກສັ່ງສອນໃນຄວາມ
ບໍລິສຸດທົ່ວແຜ່ນດິນ, ແລະ ພຣະຜູ້ເປັນເຈົ້າ
ໄດ້ຖອກເທພຣະພອນຂອງພຣະອົງລົງມາ
ເທິງຜູ້ຄົນ—ປີທີສິບສີ່ແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້.

ເລື່ອງລາວຂອງພວກລູກຊາຍຂອງໂມໄຊ
ຢາ, ຜູ້ທີ່ປະຕິເສດບໍ່ຍອມຮັບສິດທິຂອງຕົນ
ເພື່ອປົກຄອງອານາຈັກເພາະພຣະຄຳຂອງ
ພຣະເຈົ້າ, ແລະ ໄດ້ຂຶ້ນໄປຫາແຜ່ນດິນ
ນີໄຟເພື່ອສັ່ງສອນຊາວເລມັນ; ຄວາມທຸກ
ທໍລະມານ ແລະ ການປົດປ່ອຍຂອງພວກ
ເຂົາ—ຕາມບັນທຶກຂອງແອວມາ.

*ມີຢູ່ໃນບົດທີ 17 ຈົນເຖິງບົດທີ 27.*

## ບົດທີ 17

*ພວກລູກຊາຍຂອງໂມໄຊຢາມີວິນຍານແຫ່ງການທຳນາຍ ແລະ ການເປີດເຜີຍ—ພວກເຂົາໄດ້ແຍກກັນໄປຫລາຍເສັ້ນທາງເພື່ອປະກາດພຣະຄຳແກ່ຊາວເລມັນ—ອຳໂມນໄປຫາແຜ່ນດິນອິດຊະມາເອນ ແລະ ກາຍເປັນຂ້າໃຊ້ຂອງກະສັດລາໂມໄນ—ອຳໂມນປົກປັກຮັກສາຝູງແກະຂອງກະສັດ ແລະ ໄດ້ເຂັ່ນຂ້າສັດຕູຂອງລາວທີ່ນ້ຳຊີບັດ. ຂໍ້ທີ 1–3, ປະມານ 77 ປີ ກ່ອນ ຄ.ສ.; ຂໍ້ທີ 4, ປະມານ 91–77 ປີ ກ່ອນ ຄ.ສ.; ແລະ ຂໍ້ທີ 5–39, ປະມານ 91 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ໃນຂະນະທີ່ແອວມາກຳລັງເດີນທາງອອກ
ຈາກແຜ່ນດິນກີເດໂອນໄປທາງໃຕ້, ໄປຫາ
ແຜ່ນດິນແມນທາຍຢູ່ນັ້ນ, ຈົ່ງເບິ່ງ, ເພິ່ນມີ
ຄວາມແປກປະຫລາດໃຈຫລາຍ, ເພາະວ່າ
ເພິ່ນໄດ້ [ກ]ພົບເຫັນ [ຂ]ພວກລູກຊາຍຂອງໂມ
ໄຊຢາທີ່ກຳລັງເດີນທາງມຸ້ງໜ້າໄປຫາແຜ່ນ
ດິນເຊຣາເຮັມລາ.

18 *ຂ* ຄມພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.
*ຄ* ຄມພ ອິດສາ.
19 *ກ* ຄມພ ພຣະເຢຊູຄຣິດ—ການທຳນາຍກ່ຽວກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ.
20 *ກ* 2 ນຟ 26:9; 3 ນຟ 11:7–14.
*ຂ* 1 ນຟ 12:4–6.
21 *ກ* ແອວ 15:17.
**17** 1 *ກ* ແອວ 27:16.
*ຂ* ມຊຢ 27:34.

2 ບັດນີ້ພວກລູກຊາຍຂອງໂມໄຊຢານີ້
ໄດ້ຢູ່ກັບແອວມາໃນເວລາທີ່ທູດມາປະກົດ
ຕໍ່ເພິ່ນ [ກ]ເທື່ອທຳອິດ; ສະນັ້ນ ແອວມາຈຶ່ງ
ມີຄວາມປິຕິຍິນດີຢ່າງຍິ່ງທີ່ໄດ້ພົບກັບອ້າຍ
ນ້ອງຂອງເພິ່ນ; ແລະ ສິ່ງທີ່ເຮັດໃຫ້ເພິ່ນມີ
ຄວາມສຸກທີ່ສຸດແມ່ນເຂົາເຈົ້າຍັງເປັນອ້າຍ
ນ້ອງໃນພຣະຜູ້ເປັນເຈົ້າຂອງເພິ່ນຢູ່; ແທ້
ຈິງແລ້ວ, ແລະ ເຂົາເຈົ້າໄດ້ໝັ້ນຄົງຫລາຍ
ຂຶ້ນໃນຄວາມຮູ້ເລື່ອງຄວາມຈິງ; ເພາະເຂົາ
ເຈົ້າເປັນຄົນມີຄວາມເຂົ້າໃຈຢ່າງເລິກຊຶ້ງ
ແລະ ເຂົາເຈົ້າໄດ້ [ຂ]ຄົ້ນຄວ້າພຣະຄຳພີຢ່າງ
ພາກພຽນ, ເພື່ອເຂົາເຈົ້າຈະໄດ້ຮູ້ຈັກພຣະ
ຄຳຂອງພຣະເຈົ້າ.
3 ແຕ່ນີ້ຍັງບໍ່ໝົດ; ເຂົາເຈົ້າຍອມຕົນໃນ
ການ [ກ]ອະທິຖານ, ແລະ ການຖືສິນອົດ
ເຂົ້າຫລາຍທີ່ສຸດ; ສະນັ້ນ ເຂົາເຈົ້າຈຶ່ງມີ
ວິນຍານແຫ່ງການທຳນາຍ, ແລະ ວິນຍານ
ແຫ່ງການເປີດເຜີຍຢູ່ນຳ, ແລະ ເວລາເຂົາ
ເຈົ້າ [ຂ]ສິດສອນ, ເຂົາເຈົ້າກໍສິດສອນດ້ວຍ
ອຳນາດ ແລະ ສິດອຳນາດຂອງພຣະເຈົ້າ.
4 ແລະ ເຂົາເຈົ້າໄດ້ສິດສອນພຣະຄຳ
ຂອງພຣະເຈົ້າມາເປັນເວລາສິບສີ່ປີຢູ່ໃນ
ບັນດາຊາວເລມັນ, ໄດ້ຮັບ [ກ]ຄວາມສຳ
ເລັດຢ່າງຫລວງຫລາຍໃນ [ຂ]ການນຳພາ
ຫລາຍຄົນມາສູ່ຄວາມຮູ້ເລື່ອງຄວາມຈິງ;
ແທ້ຈິງແລ້ວ, ໂດຍອຳນາດແຫ່ງການເວົ້າ
ຂອງເຂົາເຈົ້າ ໄດ້ນຳເອົາຫລາຍຄົນມາຢູ່ຕໍ່
ໜ້າແທ່ນບູຊາຂອງພຣະເຈົ້າ, ເພື່ອເອີ້ນຫາ
ພຣະນາມຂອງພຣະອົງ ແລະ [ຄ]ສາລະພາບ
ບາບຂອງພວກເຂົາຕໍ່ພຣະອົງ.
5 ບັດນີ້ ນີ້ຄືສິ່ງທີ່ເກີດຂຶ້ນກັບເຂົາເຈົ້າ
ໃນການເດີນທາງຂອງເຂົາເຈົ້າ, ເພາະເຂົາ
ເຈົ້າໄດ້ມີຄວາມທຸກ; ເຂົາເຈົ້າໄດ້ທົນມາ
ຫລາຍ, ທັງທາງຮ່າງກາຍ ແລະ ທາງຈິດ
ໃຈ, ເປັນຕົ້ນວ່າຄວາມອຶດຫິວ, ຄວາມອິດ
ເມື່ອຍ, ແລະ [ກ]ເຮັດວຽກໜັກທາງວິນຍານ
ນຳອີກ.
6 ບັດນີ້ ນີ້ຄືການເດີນທາງຂອງເຂົາເຈົ້າ:
ໂດຍທີ່ໄດ້ [ກ]ອຳລາຈາກໂມໄຊຢາບິດາຂອງ
ເຂົາເຈົ້າໄປໃນປີທຳອິດຂອງຜູ້ຕັດສິນ;
ໂດຍ [ຂ]ບໍ່ຍອມຮັບລາຊາອານາຈັກຊຶ່ງບິດາ
ຂອງຕົນປາດຖະໜາຈະມອບໃຫ້, ແລະ ນີ້
ກໍເປັນເຈດຕະນາຂອງຜູ້ຄົນນຳອີກ;
7 ເຖິງຢ່າງໃດກໍຕາມ ເຂົາເຈົ້າໄດ້ອອກ
ຈາກແຜ່ນດິນເຊຣາເຮັມລາໄປ, ແລະ ໄດ້
ເອົາດາບຂອງເຂົາເຈົ້າ ແລະ ຄັນທະນູຂອງ
ເຂົາເຈົ້າ, ແລະ ລູກທະນູຂອງເຂົາເຈົ້າ,
ແລະ ກະຖຸນຂອງເຂົາເຈົ້າ; ແລະ ສິ່ງນີ້ເຂົາ
ເຈົ້າເຮັດໄປເພື່ອຈະໄດ້ຫາອາຫານມາລ້ຽງ
ຕົນເອງໃນລະຫວ່າງທີ່ຢູ່ໃນຖິ່ນແຫ້ງແລ້ງ
ກັນດານ.
8 ແລະ ເຂົາເຈົ້າໄດ້ເຂົ້າໄປໃນຖິ່ນແຫ້ງ
ແລ້ງກັນດານພ້ອມດ້ວຍຄົນຈຳນວນໜຶ່ງ
ຊຶ່ງເຂົາເຈົ້າໄດ້ເລືອກໄວ້, ຂຶ້ນໄປຫາແຜ່ນ
ດິນນີໄຟ, ເພື່ອສັ່ງສອນພຣະຄຳຂອງພຣະ
ເຈົ້າໃຫ້ແກ່ຊາວເລມັນ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຂົາ
ເຈົ້າໄດ້ເດີນທາງໄປໃນຖິ່ນແຫ້ງແລ້ງກັນ
ດານຫລາຍມື້, ແລະ ເຂົາເຈົ້າໄດ້ຖືສິນອົດ
ເຂົ້າ ແລະ [ກ]ອະທິຖານຂໍໃຫ້ພຣະຜູ້ເປັນເຈົ້າ

2ກ ມຊຢ 27:11–17.
ຂ ຄມພ ພຣະຄຳພີ.
3ກ ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ; ອະທິຖານ, ການອະທິຖານ, ຄຳອະທິຖານ.
ຂ ຄມພ ສອນ, ຜູ້ສອນ, ຄູສອນ—ການສອນດ້ວຍພຣະວິນຍານ.
4ກ ແອວ 29:14.
ຂ ຄມພ ວຽກງານເຜີຍແຜ່.
ຄ ຄມພ ສາລະພາບ, ການສາລະພາບ.
5ກ ແອວ 8:10.
6ກ ມຊຢ 28:1, 5–9.
ຂ ມຊຢ 29:3.
9ກ ແອວ 25:17. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

ປະທານສ່ວນໜຶ່ງຂອງພຣະວິນຍານຂອງ
ພຣະອົງໃຫ້ໄປນຳ ແລະ ສະຖິດຢູ່ກັບເຂົາ
ເຈົ້າ, ເພື່ອເຂົາເຈົ້າຈະໄດ້ເປັນ ຂເຄື່ອງມືໃນ
ພຣະຫັດຂອງພຣະເຈົ້າ, ຖ້າຫາກເປັນໄປ
ໄດ້, ເພື່ອຈະໄດ້ນຳພາຊາວເລມັນຜູ້ເປັນ
ພີ່ນ້ອງຂອງເຂົາເຈົ້າມາສູ່ຄວາມຮູ້ເລື່ອງ
ຄວາມຈິງ, ໃຫ້ມາຮູ້ເລື່ອງຄວາມຕ້ອຍຕ່ຳ
ຂອງ ຄຮີດຄອງປະເພນີຂອງບັນພະບຸລຸດ
ຂອງພວກເຂົາ ຊຶ່ງບໍ່ຖືກຕ້ອງ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າໄດ້ສະເດັດມາ ກຢ້ຽມຢາມ
ເຂົາເຈົ້າດ້ວຍ ຂພຣະວິນຍານຂອງພຣະອົງ,
ແລະ ໄດ້ກ່າວກັບເຂົາເຈົ້າດັ່ງນີ້: ຈົ່ງ ຄສະ
ບາຍໃຈເຖີດ. ແລະ ເຂົາເຈົ້າກໍສະບາຍໃຈ.
11 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເຂົາເຈົ້າອີກວ່າ: ຈົ່ງອອກໄປໃນບັນດາ
ຊາວເລມັນພີ່ນ້ອງຂອງພວກເຈົ້າ, ແລະ
ສະຖາປະນາຄຳຂອງເຮົາ; ເຖິງຢ່າງໃດກໍ
ຕາມ, ພວກເຈົ້າຈົ່ງ ກອົດທົນໃນຄວາມອົດ
ກັ້ນ ແລະ ຄວາມທຸກເພື່ອພວກເຈົ້າຈະໄດ້
ສະແດງຕົວຢ່າງອັນດີໃນເຮົາອອກມາໃຫ້
ຜູ້ຄົນເຫລົ່ານັ້ນເຫັນ, ແລະ ເຮົາຈະເຮັດ
ໃຫ້ພວກເຈົ້າເປັນເຄື່ອງມືໃນພຣະຫັດຂອງ
ເຮົາ ເພື່ອຈິດວິນຍານຫລາຍດວງຈະໄດ້
ຮັບຄວາມລອດ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃຈ
ຂອງພວກລູກຊາຍຂອງໂມໄຊຢາ, ແລະ
ຜູ້ທີ່ຢູ່ກັບເຂົາເຈົ້າເກີດຄວາມກ້າຫານຂຶ້ນ
ເພື່ອຈະອອກໄປຫາຊາວເລມັນ ເພື່ອປະ
ກາດພຣະຄຳຂອງພຣະເຈົ້າແກ່ພວກເຂົາ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ເຂົາເຈົ້າໄປຮອດຊາຍແດນຂອງແຜ່ນດິນ
ຂອງຊາວເລມັນນັ້ນ, ເຂົາເຈົ້າກໍໄດ້ ກແຍກ
ຍ້າຍກັນໄປ, ໂດຍໄວ້ວາງໃຈໃນພຣະຜູ້
ເປັນເຈົ້າວ່າເຂົາເຈົ້າຈະໄດ້ພົບກັນອີກຫລັງ
ຈາກການ ຂເກັບກ່ຽວຂອງເຂົາເຈົ້າສິ້ນສຸດ
ລົງ; ເພາະວ່າເຂົາເຈົ້າຄິດວ່າວຽກງານທີ່
ເຂົາເຈົ້າເຮັດເປັນວຽກງານອັນສຳຄັນ.
14 ແລະ ມັນຍິ່ງໃຫຍ່ແທ້ໆ, ເພາະວ່າ
ເຂົາເຈົ້າຍອມຮັບວຽກງານທີ່ຈະສັ່ງສອນ
ພຣະຄຳຂອງພຣະເຈົ້າໃຫ້ຄົນ ກປ່າ ແລະ
ແຂງກະດ້າງ ແລະ ປ່າເຖື່ອນ; ໃຫ້ແກ່ຜູ້ຄົນ
ທີ່ເບີກບານໃນການຄາດຕະກຳ, ໂຈນລະ
ກຳ, ແລະ ປຸ້ນຈີ້ຊາວນີໄຟ; ແລະ ໃຈຂອງ
ພວກເຂົາໝົກໝຸ້ນຢູ່ກັບຂອງມີຄ່າ, ຫລື ຢູ່
ກັບຄຳ ແລະ ເງິນ, ແລະ ຫີນທີ່ມີຄ່າ; ເຖິງ
ຢ່າງໃດກໍຕາມ ພວກເຂົາຍັງພະຍາຍາມຫາ
ສິ່ງຂອງເຫລົ່ານີ້ມາດ້ວຍການຄາດຕະກຳ
ແລະ ການປຸ້ນຈີ້, ເພື່ອພວກເຂົາຈະບໍ່ຕ້ອງ
ເຮັດວຽກເພື່ອມັນດ້ວຍມືຂອງຕົນເອງ.
15 ພວກເຂົາຈຶ່ງເປັນຄົນຂີ້ຄ້ານມັກງ່າຍ
ແບບນີ້, ຊຶ່ງສ່ວນຫລາຍໄດ້ກາບໄຫວ້ຮູບ
ບູຊາ, ແລະ ກຄວາມສາບແຊ່ງຂອງພຣະ
ເຈົ້າຈຶ່ງຕົກຢູ່ກັບພວກເຂົາ ເພາະວ່າ ຂຮີດ
ຄອງປະເພນີຂອງບັນພະບຸລຸດຂອງພວກ
ເຂົາທັງໆທີ່ພຣະຜູ້ເປັນເຈົ້າຍື່ນຄຳສັນຍາ
ມາໃຫ້ພວກເຂົາແລ້ວໃນເງື່ອນໄຂຂອງ
ການກັບໃຈ.
16 ສະນັ້ນ, ສິ່ງນີ້ຈຶ່ງ ກເປັນເຫດໃຫ້ພວກ
ລູກຊາຍຂອງໂມໄຊຢາຍອມຮັບວຽກງານ
ອັນນີ້, ເພື່ອວ່າບາງທີເຂົາເຈົ້າອາດຈະໄດ້
ນຳພາພວກເຂົາມາສູ່ການກັບໃຈໄດ້; ເພື່ອ

9 ຂ ມຊຢ 23:10; ແອວ 26:3.
ຄ ແອວ 3:10–12.
10 ກ ຄພ 5:16.
ຂ ຄມພ ພຣະວິນຍານບໍລິສຸດ.
ຄ ແອວ 26:27.
11 ກ ແອວ 20:29. ຄມພ ອົດທົນ, ຄວາມອົດທົນ.
13 ກ ແອວ 21:1.
ຂ ມທ 9:37.
14 ກ ມຊຢ 10:12.
15 ກ ແອວ 3:6–19; 3 ນຟ 2:15–16.
ຂ ແອວ 9:16–24; 18:5.
16 ກ ມຊຢ 28:1–3.

ເຂົາເຈົ້າອາດຈະນຳພາພວກເຂົາມາຮູ້ຈັກ
ເຖິງແຜນແຫ່ງການໄຖ່.
17 ສະນັ້ນ ເຂົາເຈົ້າຈຶ່ງໄດ້ແຍກຍ້າຍກັນ
ໄປ, ແລະ ອອກໄປໃນບັນດາຄົນເຫລົ່ານັ້ນ
ໂດຍລຳພັງຕາມພຣະຄຳ ແລະ ອຳນາດ
ຂອງພຣະເຈົ້າຊຶ່ງຖືກມອບໃຫ້ແກ່ເຂົາເຈົ້າ.
18 ແຕ່ອຳໂມນໂດຍທີ່ເປັນຫົວໜ້າຂອງ
ເຂົາເຈົ້າ, ຫລື ຕາມຈິງແລ້ວ ລາວໄດ້ປະ
ຕິບັດສາດສະໜາກິດແກ່ເຂົາເຈົ້າ, ແລະ
ລາວກໍໄດ້ອຳລາຈາກເຂົາເຈົ້າໄປຫລັງຈາກ
[ກ]ໃຫ້ພອນຕາມໜ້າທີ່ຂອງໃຜລາວ, ໂດຍ
ໃຫ້ພຣະຄຳຂອງພຣະເຈົ້າແກ່ເຂົາເຈົ້າ, ຫລື
ປະຕິບັດສາດສະໜາກິດແກ່ເຂົາເຈົ້າກ່ອນ
ທີ່ລາວຈະຈາກໄປ; ແລະ ເຂົາເຈົ້າຈຶ່ງໄດ້
ອອກໄປບ່ອນຕ່າງໆທົ່ວແຜ່ນດິນຕາມນັ້ນ.
19 ແລະ ອຳໂມນໄດ້ໄປຫາແຜ່ນດິນອິດ
ຊະມາເອນ, ຊຶ່ງເອີ້ນຕາມຊື່ພວກລູກຊາຍ
ຂອງ [ກ]ອິດຊະມາເອນ, ຜູ້ກັບກາຍເປັນຊາວ
ເລມັນ.
20 ແລະ ເວລາ ທີ່ ອຳໂມນ ເຂົ້າ ໄປ ໃນ
ແຜ່ນດິນອິດຊະມາເອນ, ຊາວເລມັນກໍຈັບ
ລາວ, ແລະ ມັດລາວໄວ້ເພາະວ່າມັນເປັນ
ທຳນຽມຂອງເຂົາເຈົ້າທີ່ຈະມັດຊາວນີໄຟ
ທຸກຄົນທີ່ຕົກຢູ່ໃນກຳມືຂອງຕົນ, ແລະ ເອົາ
ລາວໄປຢູ່ຕໍ່ໜ້າກະສັດ; ແລະ ສຸດແລ້ວແຕ່
ຄວາມພໍໃຈຂອງກະສັດທີ່ຈະຂ້າ ຫລື ເອົາ
ໄວ້ເປັນຊະເລີຍ, ຫລື ເອົາເຂົ້າຄຸກ, ຫລື
ເນລະເທດອອກຈາກແຜ່ນດິນຕາມຄວາມ
ປະສົງ ແລະ ຄວາມພໍໃຈຂອງເພິ່ນ.
21 ແລະ ອຳໂມນໄດ້ຖືກນຳໄປຢູ່ຕໍ່ໜ້າ
ກະສັດຜູ້ປົກຄອງແຜ່ນດິນອິດຊະມາເອນ
ດັ່ງນີ້; ແລະ ຊື່ຂອງເພິ່ນຄື ລາໂມໄນ; ແລະ
ເພິ່ນເປັນຜູ້ສືບເຊື້ອສາຍຂອງອິດຊະມາ
ເອນ.
22 ແລະ ກະສັດ ໄດ້ ສອບ ຖາມ ອຳໂມນ
ວ່າ ເປັນຫຍັງລາວຈຶ່ງເຂົ້າມາໃນ ແຜ່ນດິນ
ຊາວ ເລມັນ ຫລື ວ່າໃນບັນດາຜູ້ຄົນຂອງ
ເພິ່ນ.
23 ແລະ ອຳໂມນ ເວົ້າກັບ ເພິ່ນ ວ່າ: ແທ້
ຈິງ ແລ້ວ, ຂ້ານ້ອຍ ປາດ ຖະໜາ ຈະ ຢູ່ ໃນ
ບັນດາຜູ້ຄົນພວກນີ້ຊົ່ວໄລຍະໜຶ່ງ; ແທ້ຈິງ
ແລ້ວ, ແລະ ອາດຈະຢູ່ຈົນຮອດມື້ຂ້ານ້ອຍ
ຕາຍ.
24 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກະສັດລາໂມໄນມີຄວາມພໍໃຈກັບອຳໂມນ,
ແລະ ໄດ້ສັ່ງໃຫ້ແກ້ເຊືອກຂອງລາວອອກ;
ແລະ ເພິ່ນ ຢາກ ໃຫ້ ອຳໂມນ ຮັບ ເອົາ ລູກ
ສາວຄົນໜຶ່ງຂອງເພິ່ນໄວ້ເປັນພັນລະຍາ.
25 ແຕ່ ອຳໂມນ ເວົ້າຕໍ່ກະສັດວ່າ: ບໍ່ໄດ້
ດອກ, ແຕ່ຂ້ານ້ອຍຈະເປັນຂ້າໃຊ້ທ່ານ.
ສະນັ້ນ ອຳໂມນຈຶ່ງໄດ້ກາຍເປັນຂ້າໃຊ້ຂອງ
ກະສັດລາໂມໄນ. ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ລາວຖືກແຕ່ງຕັ້ງໃຫ້ຢູ່ກັບບັນດາ
ຂ້າໃຊ້ຄົນອື່ນໆເພື່ອດູແລຝູງສັດລ້ຽງຂອງ
ລາໂມໄນຕາມທຳນຽມຂອງຊາວເລມັນ.
26 ແລະ ຫລັງ ຈາກ ລາວ ໄດ້ ຮັບ ໃຊ້
ກະສັດຢູ່ສາມມື້ແລ້ວ, ໃນຂະນະທີ່ລາວກຳ
ລັງຢູ່ກັບຂ້າໃຊ້ທີ່ເປັນຊາວເລມັນ ຜູ້ກຳລັງ
ພາຝູງສັດລ້ຽງລົງໄປກິນນ້ຳ, ຊຶ່ງເອີ້ນວ່າ
ນ້ຳຊີບັດ, ແລະ ເປັນບ່ອນທີ່ຊາວເລມັນທັງ
ໝົດຕ້ອນເອົາຝູງສັດລ້ຽງຂອງພວກເຂົາໄປ
ບ່ອນນັ້ນ, ເພື່ອມັນຈະໄດ້ກິນນ້ຳ—
27 ສະນັ້ນ, ໃນຂະນະທີ່ອຳໂມນ ແລະ
ຂ້າໃຊ້ຂອງກະສັດກຳລັງຕ້ອນເອົາຝູງສັດ
ລ້ຽງຂອງພວກເຂົາໄປບ່ອນມີນ້ຳນັ້ນ, ຈົ່ງ
ເບິ່ງ, ຊາວເລມັນຈຳນວນໜຶ່ງທີ່ໄດ້ເອົາຝູງ
ສັດລ້ຽງຂອງຕົນໄປກິນນ້ຳແລ້ວ, ໄດ້ຢືນ
ຢູ່ ແລະ ເຮັດໃຫ້ຝູງສັດລ້ຽງຂອງອຳໂມນ

18 *ກ* ຄມພ ພອນ, ໃຫ້ພອນ, ເປັນພອນ.
19 *ກ* 1 ນຟ 7:4–6.

ແລະ ຂ້າໃຊ້ຂອງກະສັດແຕກກະຈາຍໄປ,
ແລະ ພວກເຂົາ ໄດ້ ເຮັດ ໃຫ້ມັນ ແຕກ ກະ
ຈາຍໄປຫລາຍແທ້ໆ ເຖິງຂະໜາດທີ່ມັນໄດ້
ແຕກໄປຫລາຍທິດທາງ.
28 ບັດ ນີ້ ພວກ ຂ້າ ໃຊ້ ຂອງ ກະສັດ ເລີ່ມ
ຈົ່ມ ໂດຍກ່າວວ່າ: ບັດນີ້ກະສັດຈະຂ້າພວກ
ເຮົາຖິ້ມແລ້ວ, ຄືກັນກັບເພິ່ນໄດ້ກະທຳກັບ
ພີ່ນ້ອງຂອງພວກເຮົາ ເພາະວ່າຝູງສັດລ້ຽງ
ຂອງພວກເຂົາໄດ້ກະຈັດກະຈາຍໄປດ້ວຍ
ຄວາມຊົ່ວຮ້າຍຂອງຄົນພວກນັ້ນ. ແລະ
ພວກເຂົາກໍເລີ່ມຮ້ອງໄຫ້ຢ່າງໜັກ, ໂດຍ
ກ່າວວ່າ: ຈົ່ງເບິ່ງ, ຝູງສັດລ້ຽງຂອງພວກ
ເຮົາໄດ້ກະຈັດກະຈາຍໄປໝົດແລ້ວ.
29 ບັດ ນີ້ ພວກ ເຂົາ ຮ້ອງ ໄຫ້ ເພາະ ຢ້ານ
ວ່າຈະຖືກຂ້າຖິ້ມ. ບັດນີ້ເມື່ອອຳໂມນເຫັນ
ດັ່ງນັ້ນ ໃຈຂອງລາວກໍເຕັມໄປດ້ວຍຄວາມ
ສຸກ; ເພາະລາວກ່າວຢູ່ໃນໃຈວ່າ, ເຮົາຈະ
ໄດ້ສະແດງອຳນາດຂອງເຮົາແກ່ໝູ່ເພື່ອນ
ຂ້າໃຊ້ຂອງເຮົາ, ຫລື ໃຊ້ອຳນາດທີ່ຢູ່ກັບ
ເຮົາ, ໃນການນຳເອົາຝູງສັດລ້ຽງເຫລົ່າ
ນັ້ນຄືນມາໃຫ້ກະສັດ, ເພື່ອເຮົາຈະໄດ້ເອົາ
ຊະນະໃຈຂອງໝູ່ເພື່ອນຂ້າໃຊ້ເຫລົ່ານີ້
ຂອງເຮົາ, ເພື່ອເຮົາຈະໄດ້ນຳພວກເຂົາໄປ
ໃຫ້ເຊື່ອຖືໃນຄຳເວົ້າຂອງເຮົາ.
30 ແລະ ບັດ ນີ້, ນີ້ ຄື ຄວາມ ຄິດ ຂອງ
ອຳໂມນ, ເວລາລາວໄດ້ເຫັນຄວາມທຸກ
ຂອງຄົນເຫລົ່ານັ້ນ ຜູ້ທີ່ລາວຖືວ່າເປັນພີ່
ນ້ອງຂອງລາວ.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ ເຮັດ ໃຫ້ ພວກ ເຂົາ ໝັ້ນ ໃຈ ໃນ ຄຳ ເວົ້າ
ຂອງລາວ, ໂດຍກ່າວວ່າ: ພີ່ນ້ອງຂອງເຮົາ
ເອີຍ, ຈົ່ງສະບາຍໃຈເຖີດ, ແລະ ຂໍໃຫ້ພວກ
ເຮົາອອກໄປເພື່ອຊອກຫາຝູງສັດລ້ຽງ ແລະ
ຮອບຮອມມັນເຂົ້າກັນອີກ ແລະ ປ້ອງມັນ
ມາຫາບ່ອນມີນ້ຳ; ແລະ ພວກເຮົາຈະປົກ
ປັກຮັກສາຝູງສັດລ້ຽງໄວ້ໃຫ້ກະສັດດ້ວຍວິ
ທີນີ້ ແລະ ເພິ່ນຈະບໍ່ຂ້າພວກເຮົາ.
32 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ໄປຊອກຫາຝູງສັດລ້ຽງ, ໂດຍ
ຕິດຕາມອຳໂມນໄປ, ແລະ ພວກເຂົາຟ້າວ
ອອກໄປຢ່າງວ່ອງໄວ ແລະ ໄດ້ສະກັດກັ້ນ
ຝູງສັດລ້ຽງຂອງກະສັດ ແລະ ໄດ້ຮອບຮອມ
ມັນເຂົ້າກັນອີກໄປຫາແມ່ນ້ຳ.
33 ແລະ ຄົນພວກນັ້ນໄດ້ມາຢືນຢູ່ເພື່ອ
ຈະເຮັດໃຫ້ຝູງສັດລ້ຽງຂອງພວກເຂົາແຕກ
ກະຈັດກະຈາຍໄປອີກ; ແຕ່ອຳໂມນໄດ້ເວົ້າ
ກັບອ້າຍນ້ອງຂອງລາວວ່າ: ຈົ່ງລ້ອມຝູງ
ສັດໄວ້ໂດຍຮອບເພື່ອບໍ່ໃຫ້ມັນໜີໄປ; ແລະ
ເຮົາເອງຈະໄປຕໍ່ສູ້ກັບຄົນພວກນັ້ນຜູ້ທີ່ເຮັດ
ໃຫ້ຝູງສັດຂອງພວກເຮົາແຕກກະຈັດກະ
ຈາຍໄປ.
34 ສະນັ້ນ, ພວກເຂົາຈຶ່ງໄດ້ເຮັດຕາມທີ່
ອຳໂມນສັ່ງ, ແລະ ລາວໄດ້ອອກໄປຕໍ່ສູ້ກັບ
ພວກນັ້ນ ຊຶ່ງຢືນຢູ່ໃກ້ນ້ຳຊີບັດ; ແລະ ພວກ
ເຂົາມີຈຳນວນບໍ່ໜ້ອຍເລີຍ.
35 ສະນັ້ນ ພວກເຂົາຈຶ່ງບໍ່ຢ້ານອຳໂມນ,
ເພາະພວກເຂົາຄິດວ່າຄົນຜູ້ດຽວຂອງພວກ
ເຂົາກໍສາມາດຂ້າລາວໄດ້ ຕາມຄວາມພໍໃຈ
ຂອງພວກເຂົາ, ເພາະວ່າພວກເຂົາບໍ່ຮູ້ວ່າ
ພຣະຜູ້ເປັນເຈົ້າໄດ້ສັນຍາກັບໂມໄຊຢາໄວ້
ວ່າ ພຣະອົງຈະ [ກ]ປົດປ່ອຍພວກລູກຊາຍ
ຂອງເພິ່ນໃຫ້ພົ້ນຈາກກຳມືຂອງພວກເຂົາ;
ທັງພວກເຂົາບໍ່ຮູ້ຈັກຫຍັງເລີຍກ່ຽວກັບພຣະ
ຜູ້ເປັນເຈົ້າ; ສະນັ້ນ ພວກເຂົາຈຶ່ງດີໃຈໃນ
ຄວາມພິນາດຂອງພີ່ນ້ອງຂອງພວກເຂົາ;
ແລະ ເພາະເຫດນີ້ ພວກເຂົາຈຶ່ງຢືນຢູ່ເພື່ອ
ເຮັດໃຫ້ຝູງສັດລ້ຽງຂອງກະສັດແຕກກະຈັດ
ກະຈາຍໄປອີກ.

35 *ກ* ມຊຢ 28:7; ແອວ 19:22–23.

36 ແຕ່ [ກ]ອຳໂມນໄດ້ກ້າວອອກໄປ ແລະ ເລີ່ມແກວ່ງກ້ອນຫີນໃສ່ພວກເຂົາດ້ວຍກະຖຸນຂອງລາວ; ແທ້ຈິງແລ້ວ, ດ້ວຍອຳນາດອັນຍິ່ງໃຫຍ່ ລາວໄດ້ແກວ່ງກ້ອນຫີນໃສ່ພວກເຂົາ; ແລະ ລາວໄດ້ຂ້າພວກເຂົາເຫລົ່ານັ້ນ [ຂ]ຈຳນວນໜຶ່ງໂດຍວິທີນີ້ ເຖິງຂະໜາດທີ່ພວກເຂົາແປກປະຫລາດໃຈໃນອຳນາດຂອງລາວ; ເຖິງຢ່າງໃດກໍຕາມພວກເຂົາຍັງໃຈຮ້າຍເພາະຄົນຕາຍເປັນພີ່ນ້ອງຂອງພວກເຂົາ, ແລະ ພວກເຂົາຕັ້ງໃຈຈະໃຫ້ລາວຕາຍ; ສະນັ້ນ, ເມື່ອເຫັນວ່າພວກເຂົາບໍ່ [ຄ]ສາມາດແກວ່ງກ້ອນຫີນໃສ່ລາວ, ພວກເຂົາຈຶ່ງອອກມາພ້ອມດ້ວຍໄມ້ຄ້ອນເພື່ອຈະຂ້າລາວ.

37 ແຕ່ ຈົ່ງເບິ່ງ, ທຸກຄົນທີ່ຍົກໄມ້ຄ້ອນເພື່ອຈະຕີອຳໂມນນັ້ນ, ລາວໄດ້ຕັດແຂນຂອງພວກເຂົາອອກດ້ວຍດາບຂອງລາວ; ເພາະລາວໄດ້ຕ້ານທານການຕີຂອງພວກເຂົາດ້ວຍການຟັນແຂນຂອງພວກເຂົາ, ດ້ວຍຄົມດາບຂອງລາວ, ເຖິງຂະໜາດທີ່ພວກເຂົາເລີ່ມແປກປະຫລາດໃຈ ແລະ ເລີ່ມປົບໜີໄປຕໍ່ໜ້າລາວ; ແທ້ຈິງແລ້ວ, ພວກເຂົາມີຈຳນວນບໍ່ໜ້ອຍເລີຍ; ແລະ ລາວເຮັດໃຫ້ພວກເຂົາປົບໜີໄປດ້ວຍກຳລັງແຂນຂອງລາວ.

38 ບັດນີ້ມີຫົກຄົນຂອງພວກເຂົາລົ້ມຕາຍລົງດ້ວຍກະຖຸນ, ແຕ່ລາວບໍ່ໄດ້ຂ້າຜູ້ໃດດ້ວຍດາບຂອງລາວນອກຈາກຫົວໜ້າຂອງພວກເຂົາ; ແລະ ລາວໄດ້ຟັນແຂນຂອງທຸກຄົນທີ່ຍົກຂຶ້ນເພື່ອຈະທຳລາຍລາວ, ແລະ ມັນມີຈຳນວນບໍ່ໜ້ອຍເລີຍ.

39 ແລະ ເວລາລາວໄດ້ຂັບໄລ່ພວກເຂົາອອກໄປໄກແລ້ວ, ລາວຈຶ່ງກັບມາ ແລະ ພວກເຂົາໄດ້ພາຝູງສັດລ້ຽງໄປກິນນ້ຳ ແລະ ຕ້ອນມັນກັບໄປຫາທົ່ງຫຍ້າຂອງກະສັດ, ຈາກນັ້ນພວກເຂົາກໍໄດ້ເຂົ້າໄປຫາກະສັດ, ໂດຍເອົາແຂນຂອງຄົນທີ່ພະຍາຍາມຂ້າລາວໄປນຳ ຊຶ່ງຖືກຟັນດ້ວຍດາບຂອງອຳໂມນ, ແລະ ພວກເຂົານຳເອົາແຂນເຫລົ່ານັ້ນໄປຫາກະສັດເພື່ອເປັນປະຈັກພະຍານເຖິງສິ່ງທີ່ພວກເຂົາໄດ້ກະທຳໄປ.

## ບົດທີ 18

*ກະສັດລາໂມໄນຄິດວ່າອຳໂມນເປັນພຣະວິນຍານທີ່ຍິ່ງໃຫຍ່—ອຳໂມນສິດສອນກະສັດກ່ຽວກັບການສ້າງ, ການກະທຳຂອງພຣະເຈົ້າຕໍ່ມະນຸດ, ແລະ ການໄຖ່ຊຶ່ງມາໂດຍຜ່ານທາງພຣະຄຣິດ—ລາໂມໄນເຊື່ອ ແລະ ລົ້ມລົງຢູ່ກັບພື້ນດິນຄືກັບວ່າຕາຍແລ້ວ. ປະມານ 90 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດລາໂມໄນໄດ້ສັ່ງໃຫ້ຂ້າໃຊ້ຂອງເພິ່ນອອກມາຢືນ ເພື່ອເປັນພະຍານເຖິງເລື່ອງທັງໝົດທີ່ພວກເຂົາເຫັນມາກ່ຽວກັບເລື່ອງນີ້.

2 ແລະ ເວລາພວກເຂົາທຸກຄົນໃຫ້ການເຖິງເລື່ອງທີ່ໄດ້ເຫັນມາ ແລະ ພວກເຂົາຈຶ່ງຮູ້ຈັກເຖິງຄວາມຊື່ສັດຂອງອຳໂມນໃນການປົກປັກຮັກສາຝູງສັດລ້ຽງຂອງເພິ່ນ, ແລະ ຮູ້ເຖິງອຳນາດອັນຍິ່ງໃຫຍ່ຂອງລາວໃນການຕໍ່ສູ້ກັບຄົນພວກນັ້ນ ຊຶ່ງພະຍາຍາມຈະຂ້າລາວອີກ, ເພິ່ນມີຄວາມແປກປະຫລາດໃຈຢ່າງຍິ່ງ, ແລະ ໄດ້ກ່າວວ່າ: ແນ່ນອນທີ່ສຸດ, ນີ້ຍິ່ງໃຫຍ່ກວ່າມະນຸດທຳມະດາ. ຈົ່ງເບິ່ງ, ນີ້ບໍ່ແມ່ນພຣະວິນຍານທີ່ຍິ່ງໃຫຍ່ບໍ ທີ່ໄດ້ສົ່ງໂທດອັນແສນສາຫັດມາສູ່ຜູ້ຄົນພວກນີ້ ຍ້ອນວ່າການຄາດຕະກຳຂອງພວກເຂົາ?

36 *ກ* ອຫ 12:15. *ຂ* ແອວ 18:16. *ຄ* ແອວ 18:3.

3 ແລະ ພວກ ເຂົາ ຕອບ ກະສັດ, ແລະ
ກ່າວວ່າ: ພວກຂ້ານ້ອຍບໍ່ຮູ້ຈັກວ່າລາວເປັນ
ພຣະວິນຍານທີ່ຍິ່ງໃຫຍ່ ຫລື ວ່າມະນຸດທຳ
ມະດາ; ແຕ່ພວກຂ້ານ້ອຍຮູ້ຈັກພຽງແຕ່ວ່າ
ສັດຕູຂອງກະສັດຈະ ຂ້າລາວ [ກ]ບໍ່ ໄດ້; ທັງ
ພວກ ເຂົາ ບໍ່ ສາ ມາດ ທຳລາຍຝູງສັດລ້ຽງ
ຂອງກະສັດ ໃຫ້ແຕກກະ ຈັດ ກະ ຈາຍ ໄປ
ໄດ້ ຕາບໃດທີ່ລາວຍັງຢູ່ກັບພວກຂ້ານ້ອຍ,
ເພາະວ່າຄວາມຊຳນິຊຳນານ ແລະ ພະລັງ
ອັນຍິ່ງໃຫຍ່ຂອງລາວ; ສະນັ້ນ, ພວກຂ້າ
ນ້ອຍຈຶ່ງຮູ້ວ່າ ລາວເປັນເພື່ອນຂອງກະສັດ.
ແລະ ບັດນີ້, ໂອ້ ກະສັດເອີຍ, ພວກຂ້ານ້ອຍ
ບໍ່ເຊື່ອວ່າມະນຸດທຳມະດາຈະມີອຳນາດຍິ່ງ
ໃຫຍ່ພຽງນີ້, ເພາະພວກຂ້ານ້ອຍຮູ້ວ່າພວກ
ເຂົາບໍ່ສາມາດຂ້າລາວໄດ້.
4 ແລະ ບັດ ນີ້, ເມື່ອກະສັດ ໄດ້ ຍິນ ຂໍ້
ຄວາມນີ້ແລ້ວ, ເພິ່ນຈຶ່ງເວົ້າກັບພວກເຂົາ
ວ່າ: ບັດນີ້ຂ້າພະ ເຈົ້າຮູ້ວ່າ ນີ້ຄືພຣະວິນ
ຍານທີ່ຍິ່ງໃຫຍ່; ແລະ ພຣະອົງໄດ້ສະເດັດ
ມາ ໃນ ເວລາ ນີ້ ເພື່ອປົກປັກຮັກສາຊີວິດ
ຂອງພວກເຈົ້າ, ເພື່ອຂ້າພະ ເຈົ້າຈະບໍ່ ໄດ້
[ກ]ຂ້າພວກເຈົ້າຄືກັນກັບທີ່ຂ້າພະເຈົ້າເຄີຍ
ໄດ້ເຮັດມາແລ້ວກັບພີ່ນ້ອງຂອງພວກເຈົ້າ.
ບັດນີ້ ນີ້ຄືພຣະວິນຍານທີ່ຍິ່ງໃຫຍ່ ຊຶ່ງບັນ
ພະບຸລຸດຂອງພວກເຮົາໄດ້ເວົ້າໄວ້.
5 ບັດນີ້ ນີ້ເປັນປະ ເພນີຂອງກະສັດລາ
ໂມໄນ, ຊຶ່ງມາຈາກບິດາຂອງເພິ່ນວ່າ ມັນ
ມີ [ກ]ພຣະວິນຍານທີ່ຍິ່ງໃຫຍ່, ທັງໆທີ່ພວກ
ເຂົາເຊື່ອໃນພຣະວິນຍານທີ່ຍິ່ງໃຫຍ່ ພວກ
ເຂົາກໍຍັງຄິດວ່າອັນໃດກໍຕາມທີ່ພວກເຂົາ
ເຮັດໄປນັ້ນຖືກຕ້ອງແລ້ວ; ເຖິງຢ່າງໃດກໍ
ຕາມ, ກະສັດລາ ໂມ ໄນ ໄດ້ ເລີ່ມມີຄວາມ
ຢ້ານກົວທີ່ສຸດ, ດ້ວຍຄວາມຢ້ານທີ່ ເພິ່ນ
ເຮັດຜິດໃນການຂ້າພວກຂ້າໃຊ້ຂອງເພິ່ນ;
6 ເພາະ ວ່າ ເພິ່ນ ໄດ້ ຂ້າ ພວກ ຂ້າ ໃຊ້
ຫລາຍຄົນ ເພາະວ່າພີ່ນ້ອງຂອງພວກນີ້
ໄດ້ເຮັດໃຫ້ຝູງສັດລ້ຽງຂອງເພິ່ນກະຈັດກະ
ຈາຍໄປບ່ອນທີ່ມີນ້ຳ; ແລະ ດັ່ງນັ້ນ, ເພາະ
ພວກເຂົາໄດ້ເຮັດໃຫ້ຝູງສັດລ້ຽງຂອງພວກ
ເຂົາກະຈັດກະຈາຍໄປ ພວກເຂົາຈຶ່ງຖືກ
ຂ້າ.
7 ບັດນີ້ມັນເປັນການປະຕິບັດຂອງຊາວ
ເລມັນທີ່ຈະໄປຢືນຢູ່ໃກ້ນ້ຳຊີບັດ ເພື່ອໃຫ້
ຝູງສັດລ້ຽງຂອງຜູ້ຄົນກະຈັດກະຈາຍໄປ,
ເພື່ອພວກເຂົາຈະ ໄດ້ ໄລ່ຕ້ອນ ເອົາ ແກະທີ່
ກະຈັດກະຈາຍໄປນັ້ນໄປຫາແຜ່ນດິນຂອງ
ພວກເຂົາ, ມັນເປັນວິທີປຸ້ນຢ່າງໜຶ່ງໃນບັນ
ດາພວກເຂົາ.
8 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກະສັດລາ ໂມ ໄນໄດ້ສອບຖາມຂ້າໃຊ້ຂອງ
ເພິ່ນ, ໂດຍ ກ່າວ ວ່າ: ຄົນຜູ້ນີ້ທີ່ມີອຳນາດ
ອັນຍິ່ງໃຫຍ່ແບບນີ້ຢູ່ໃສ?
9 ແລະ ພວກເຂົາຕອບວ່າ: ຈົ່ງເບິ່ງ, ລາວ
ກຳລັງເອົາອາຫານໃຫ້ມ້າຂອງທ່ານກິນຢູ່.
ບັດນີ້ກະສັດໄດ້ສັ່ງຂ້າໃຊ້ຂອງເພິ່ນ, ກ່ອນ
ເວລາທີ່ຈະເອົາຝູງແກະໄປກິນນ້ຳວ່າ, ໃຫ້
ພວກເຂົາຕຽມມ້າ ແລະ ລົດມ້າຂອງເພິ່ນ
ໄວ້, ແລະ ນຳ ເອົາ ເພິ່ນ ໄປ ຫາ ແຜ່ນ ດິນ
ນີໄຟ ເພາະຈະມີການລ້ຽງສະຫລອງກັນ
ຢ່າງໃຫຍ່ໃນແຜ່ນດິນນີໄຟ ຊຶ່ງຈັດຂຶ້ນໂດຍ
ບິດາຂອງກະສັດລາ ໂມ ໄນຜູ້ຖືກແຕ່ງຕັ້ງ
ໃຫ້ປົກຄອງທົ່ວແຜ່ນດິນ.
10 ບັດນີ້ ເວລາກະສັດລາ ໂມ ໄນ ໄດ້ຍິນ
ວ່າ ອຳໂມນກຳລັງຕຽມມ້າ ແລະ ລົດມ້າ
ຂອງເພິ່ນຢູ່ ເພິ່ນກໍຍິ່ງປະຫລາດໃຈ, ເພາະ
ວ່າຄວາມຊື່ສັດຂອງອຳໂມນ, ຈຶ່ງກ່າວອອກ
ມາວ່າ: ແນ່ນອນທີ່ສຸດ ມັນບໍ່ເຄີຍມີຂ້າໃຊ້
ຄົນໃດໃນບັນດາຂ້າໃຊ້ທັງໝົດຂອງຂ້າພະ

**18** 3*ກ* ແອວ 17:34–38.
4*ກ* ແອວ 17:28–31.
5*ກ* ແອວ 19:25–27.
ຄມພ ພຣະເຈົ້າ,
ຝ່າຍພຣະເຈົ້າ.

ເຈົ້າທີ່ຊື່ສັດເທົ່າກັບຄົນນີ້; ເພາະລາວຈື່ຈຳ
ຄຳສັ່ງທັງໝົດຂອງຂ້າພະເຈົ້າເພື່ອປະຕິ
ບັດ.
11 ບັດນີ້ຂ້າພະເຈົ້າແນ່ໃຈວ່າ ນີ້ຄືພຣະ
ວິນຍານທີ່ຍິ່ງໃຫຍ່, ແລະ ຂ້າພະເຈົ້າປາດ
ຖະໜາຢາກໃຫ້ລາວມາຫາຂ້າພະເຈົ້າ, ແຕ່
ຂ້າພະເຈົ້າບໍ່ກ້າ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ອຳໂມນຕຽມມ້າ ແລະ ລົດມ້າໄວ້ໃຫ້ກະສັດ
ແລະ ຂ້າໃຊ້ຄົນອື່ນໆຂອງກະສັດແລ້ວ,
ລາວກໍໄປຫາກະສັດ ແລະ ລາວເຫັນສີໜ້າ
ຂອງກະສັດປ່ຽນແປງໄປ; ສະນັ້ນ ລາວ
ເກືອບຈະກັບຄືນອອກໄປ.
13 ແລະ ຂ້າໃຊ້ຜູ້ໜຶ່ງຂອງກະສັດເວົ້າ
ກັບລາວວ່າ, ຣັບບານາ, ຊຶ່ງແປວ່າ, ກະສັດ
ຜູ້ມີອຳນາດ ຫລື ຍິ່ງໃຫຍ່, ຊຶ່ງພວກເຂົາຖື
ວ່າກະສັດຂອງພວກເຂົາມີອຳນາດ ແລະ
ພວກເຂົາຈຶ່ງເວົ້າກັບອຳໂມນຕາມນັ້ນວ່າ:
ຣັບບານາ, ກະສັດປາດຖະໜາໃຫ້ເຈົ້າຢູ່
ກ່ອນ.
14 ສະນັ້ນ ອຳໂມນ ຈຶ່ງ ໄດ້ ຫັນ ຕົວ ໄປ
ຫາກະສັດ, ແລະ ກ່າວກັບກະສັດວ່າ: ໂອ້
ກະສັດເອີຍ ທ່ານປະສົງຈະໃຫ້ຂ້ານ້ອຍ
ເຮັດສິ່ງໃດໃຫ້ທ່ານ? ແລະ ກະສັດບໍ່ໄດ້
ຕອບລາວເປັນເວລາເຖິງໜຶ່ງຊົ່ວໂມງ,
ຕາມເວລາຂອງພວກເຂົາ, ເພາະວ່າກະສັດ
ບໍ່ຮູ້ຈັກວ່າຈະເວົ້າຫຍັງກັບລາວ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ອຳໂມນເວົ້າກັບເພິ່ນອີກວ່າ: ທ່ານປາດຖະ
ໜາອັນໃດຈາກຂ້ານ້ອຍ? ແຕ່ກະສັດກໍບໍ່
ຕອບ.
16 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ
ຄື ອຳໂມນໂດຍທີ່ເຕັມໄປດ້ວຍພຣະວິນ
ຍານຂອງພຣະເຈົ້າ, ສະນັ້ນ ລາວຈຶ່ງຮູ້ຈັກ
[ກ]ຄວາມນຶກຄິດຂອງກະສັດ. ແລະ ລາວໄດ້
ກ່າວກັບເພິ່ນວ່າ: ນີ້ເປັນເພາະວ່າທ່ານໄດ້
ຍິນວ່າ ຂ້ານ້ອຍປົກປັກຮັກສາຂ້າໃຊ້ ແລະ
ຝູງສັດລ້ຽງຂອງທ່ານ, ແລະ ໄດ້ຂ້າພີ່ນ້ອງ
ຂອງພວກນັ້ນເຈັດຄົນດ້ວຍກະຖຸນ ແລະ
ດາບ, ແລະ ໄດ້ຕັດແຂນຄົນອື່ນໆຂາດ,
ເພື່ອປົກປັກຮັກສາຝູງສັດລ້ຽງ ແລະ ຂ້າໃຊ້
ຂອງທ່ານ; ຈົ່ງເບິ່ງ, ດ້ວຍເຫດນີ້ບໍທີ່ກໍ່ໃຫ້
ເກີດຄວາມແປກປະຫລາດໃຈແກ່ທ່ານ?
17 ຂ້ານ້ອຍເວົ້າກັບທ່ານວ່າ, ແມ່ນຫຍັງ
ທີ່ເຮັດໃຫ້ຄວາມແປກປະຫລາດໃຈຂອງ
ທ່ານໃຫຍ່ຫລວງເຊັ່ນນີ້? ຈົ່ງເບິ່ງ, ຂ້ານ້ອຍ
ເປັນມະນຸດທຳມະດາ ແລະ ເປັນຂ້າໃຊ້
ຂອງທ່ານ; ສະນັ້ນ, ແນວໃດກໍຕາມທີ່ທ່ານ
ປາດຖະໜາ ຊຶ່ງຖືກຕ້ອງ, ສິ່ງນັ້ນຂ້ານ້ອຍກໍ
ຈະປະຕິບັດຕາມ.
18 ບັດນີ້ເວລາກະສັດໄດ້ຍິນຂໍ້ຄວາມນີ້,
ເພິ່ນກໍແປກປະຫລາດໃຈອີກ, ເພາະເພິ່ນຮູ້
ວ່າອຳໂມນ [ກ]ຫລິງເຫັນຄວາມນຶກຄິດຂອງ
ເພິ່ນໄດ້; ແຕ່ມັນກໍເປັນແນວນີ້, ຄືກະສັດ
ລາໂມໄນໄດ້ເປີດປາກ ແລະ ຖາມລາວວ່າ:
ເຈົ້າແມ່ນໃຜ? ເຈົ້າເປັນພຣະວິນຍານທີ່ຍິ່ງ
ໃຫຍ່ຜູ້ທີ່ [ຂ]ຮູ້ຈັກໝົດທຸກສິ່ງທຸກຢ່າງບໍ?
19 ອຳໂມນຕອບ ແລະ ກ່າວກັບກະສັດ
ວ່າ: ຂ້ານ້ອຍບໍ່ໄດ້ເປັນດອກ.
20 ແລະ ກະສັດ ເວົ້າວ່າ: ເຈົ້າຮູ້ຈັກ
ຄວາມນຶກຄິດຂອງໃຈຂອງຂ້າພະເຈົ້າໄດ້
ແນວໃດ? ເຈົ້າຈົ່ງເວົ້າມາຢ່າງອາດຫານ
ເຖີດ ແລະ ເວົ້າໃຫ້ຂ້າພະເຈົ້າຟັງກ່ຽວກັບ
ສິ່ງເຫລົ່ານີ້; ແລະ ບອກຂ້າພະເຈົ້າອີກ
ວ່າ ເປັນດ້ວຍອຳນາດອັນໃດທີ່ເຈົ້າໄດ້ຂ້າ
ແລະ ຕັດແຂນພວກພີ່ນ້ອງຂອງຂ້າພະເຈົ້າ
ຜູ້ທີ່ເຮັດໃຫ້ຝູງສັດລ້ຽງຂອງຂ້າພະເຈົ້າກະ
ຈັດກະຈາຍໄປ—

16 ກ ແອວ 12:3.
18 ກ ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
ຂ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.

21 ແລະ ບັດນີ້, ຖ້າຫາກເຈົ້າຈະບອກ
ຂ້າພະເຈົ້າກ່ຽວກັບສິ່ງເຫລົ່ານີ້ແລ້ວ, ອັນ
ໃດກໍຕາມທີ່ເຈົ້າປາດຖະໜາ ຂ້າພະເຈົ້າ
ຈະມອບໃຫ້; ແລະ ຖ້າຫາກຈຳເປັນແລ້ວ,
ຂ້າພະເຈົ້າຈະຄຸ້ມຄອງເຈົ້າດ້ວຍກອງທັບ
ຂອງຂ້າພະເຈົ້າ; ແຕ່ຂ້າພະເຈົ້າຮູ້ວ່າ ເຈົ້າ
ມີອຳນາດຫລາຍກວ່າກອງທັບທັງໝົດນັ້ນ;
ເຖິງຢ່າງໃດກໍຕາມ, ອັນໃດກໍຕາມທີ່ເຈົ້າ
ປາດຖະໜາຈາກຂ້າພະເຈົ້າ, ຂ້າພະເຈົ້າ
ຈະມອບໃຫ້.
22 ແລະ ອຳໂມນເປັນຜູ້ສະຫລາດຫລັກ
ແຫລມ, ແຕ່ບໍ່ມີອັນຕະລາຍ, ລາວເວົ້າກັບ
ລາໂມໄນວ່າ: ທ່ານຈະເຊື່ອຟັງຄຳເວົ້າຂອງ
ຂ້ານ້ອຍບໍ, ຖ້າຫາກຂ້ານ້ອຍບອກທ່ານ
ວ່າໂດຍອຳນາດອັນໃດທີ່ຂ້ານ້ອຍເຮັດສິ່ງ
ເຫລົ່ານີ້ໄດ້? ນີ້ເປັນສິ່ງທີ່ຂ້ານ້ອຍປາດຖະ
ໜາຈາກທ່ານ.
23 ແລະ ກະສັດ ໄດ້ ຕອບ ລາວ, ແລະ
ເວົ້າວ່າ: ແທ້ຈິງແລ້ວ, ຂ້າພະເຈົ້າຈະເຊື່ອ
ໃນຄຳເວົ້າຂອງເຈົ້າທັງໝົດ. ແລະ ດັ່ງນັ້ນ
ເພິ່ນຈຶ່ງເສຍທ່າດ້ວຍອຸບາຍ.
24 ແລະ ອຳໂມນ ເລີ່ມເວົ້າກັບກະສັດ
ດ້ວຍ [ກ]ຄວາມກ້າຫານວ່າ: ທ່ານເຊື່ອບໍວ່າ
ມີພຣະເຈົ້າ?
25 ແລະ ເພິ່ນ ໄດ້ ຕອບ ແລະ ເວົ້າ ກັບ
ລາວວ່າ: ຂ້າພະເຈົ້າບໍ່ຮູ້ຈັກວ່ານັ້ນໝາຍ
ຄວາມວ່າແນວໃດ.
26 ແລ້ວອຳໂມນຖາມວ່າ: ທ່ານເຊື່ອບໍ
ວ່າມີພຣະວິນຍານທີ່ຍິ່ງໃຫຍ່?
27 ແລະ ເພິ່ນຕອບວ່າ, ເຊື່ອ.
28 ແລະ ອຳໂມນກ່າວວ່າ: ນີ້ຄືພຣະເຈົ້າ.
ແລະ ອຳໂມນຖາມເພິ່ນອີກວ່າ: ທ່ານເຊື່ອ
ບໍວ່າມີພຣະວິນຍານທີ່ຍິ່ງໃຫຍ່ນີ້, ຜູ້ເປັນ
ພຣະເຈົ້າ, ໄດ້ສ້າງທຸກສິ່ງທຸກຢ່າງຊຶ່ງຢູ່ໃນ
ສະຫວັນ ແລະ ແຜ່ນດິນໂລກ?
29 ແລະ ເພິ່ນຕອບວ່າ: ແທ້ຈິງແລ້ວ ຂ້າ
ພະເຈົ້າເຊື່ອວ່າພຣະອົງເປັນຜູ້ສ້າງທຸກສິ່ງ
ທຸກຢ່າງຢູ່ເທິງແຜ່ນດິນໂລກ; ແຕ່ຂ້າພະ
ເຈົ້າບໍ່ຮູ້ຈັກເລື່ອງຟ້າສະຫວັນ.
30 ແລະ ອຳໂມນເວົ້າກັບເພິ່ນວ່າ: ຟ້າ
ສະຫວັນເປັນບ່ອນທີ່ພຣະເຈົ້າປະທັບຢູ່
ພ້ອມທັງເຫລົ່າທູດທີ່ສັກສິດທັງໝົດຂອງ
ພຣະອົງ.
31 ແລະ ກະສັດລາໂມໄນຖາມວ່າ: ມັນຢູ່
ເໜືອແຜ່ນດິນໂລກບໍ?
32 ແລະ ອຳໂມນຕອບວ່າ: ແມ່ນແລ້ວ,
ແລະ ພຣະອົງຫລຽວລົງມາເບິ່ງລູກຫລານ
ມະນຸດ ທັງໝົດ; ແລະ ພຣະອົງ ຮູ້ຈັກ
[ກ]ຄວາມນຶກຄິດ ແລະ ເຈດຕະນາ; ທັງໝົດ
ຂອງໃຈ; ເພາະວ່າພຣະອົງສ້າງພວກເຂົາ
ທັງໝົດໂດຍພຣະຫັດຂອງພຣະອົງເອງຕັ້ງ
ແຕ່ຕົ້ນ.
33 ແລະ ກະສັດລາໂມໄນໄດ້ເວົ້າວ່າ: ຂ້າ
ພະເຈົ້າເຊື່ອເລື່ອງທັງໝົດທີ່ເຈົ້າເວົ້າມາ.
ເຈົ້າຖືກສົ່ງມາຈາກພຣະເຈົ້າບໍ?
34 ອຳໂມນຕອບເພິ່ນວ່າ: ຂ້ານ້ອຍເປັນ
ຄົນທຳມະດາ ແລະ [ກ]ມະນຸດຄົນທຳອິດໄດ້
ຖືກສ້າງຂຶ້ນຕາມລັກສະນະຂອງພຣະເຈົ້າ,
ແລະ ພຣະວິນຍານສັກສິດຂອງພຣະອົງ
ໄດ້ເອີ້ນຂ້ານ້ອຍໃຫ້ [ຂ]ສິດສອນສິ່ງເຫລົ່າ
ນີ້ໃຫ້ແກ່ຜູ້ຄົນພວກນີ້, ເພື່ອພວກເຂົາຈະ
ຖືກນຳມາໃຫ້ຮູ້ເລື່ອງທີ່ທ່ຽງທຳ ແລະ ເປັນ
ຄວາມຈິງ;
35 ແລະ ສ່ວນໜຶ່ງຂອງ [ກ]ພຣະວິນຍານ

24 *ກ* ແອວ 38:12.
32 *ກ* ອມ 4:13; 3 ນຟ 28:6; ຄພ 6:16.
34 *ກ* ມຊຢ 7:27; ອທ 3:13–16.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ—ການສອນ ດ້ວຍພຣະວິນຍານ.
35 *ກ* ຄມພ ດົນໃຈ, ການດົນໃຈ.

ນັ້ນ ປະ ທັບ ຢູ່ ໃນ ຕົວ ຂ້າ ນ້ອຍ, ເພື່ອ ໃຫ້ [ຂ]ຄວາມຮູ້ ແລະ ອຳນາດແກ່ຂ້ານ້ອຍຕາມສັດທາ ແລະ ຄວາມປາດ ຖະໜາຂອງຂ້ານ້ອຍຊຶ່ງມີຢູ່ໃນພຣະເຈົ້າ.

36 ບັດ ນີ້ ເວລາອຳໂມນ ເວົ້າຂໍ້ຄວາມນີ້ແລ້ວ, ລາວເລີ່ມເລົ່າຕັ້ງແຕ່ການສ້າງໂລກ ແລະ ພ້ອມດ້ວຍການສ້າງອາດາມ, ແລະ ບອກເພິ່ນ ທຸກໆ ເລື່ອງ ກ່ຽວ ກັບການ ຕົກ ຂອງມະນຸດ ແລະ [ກ]ເລົ່າເລື່ອງລາວຕ່າງໆ ໃຫ້ຟັງ ແລະ ວາງບັນທຶກ ແລະ [ຂ]ພຣະຄຳພີອັນສັກສິດຂອງຜູ້ຄົນ ຊຶ່ງ [ຄ]ສາດສະດາໄດ້ເລົ່າ, ຄືນໄປຈົນເຖິງເວລາທີ່ລີໄຮ ບັນພະບຸລຸດຂອງພວກເຂົາອອກຈາກເຢຣູຊາເລັມ.

37 ແລະ ລາວໄດ້ເລົ່າໃຫ້ພວກເພິ່ນຟັງ (ໃຫ້ກະສັດ ແລະ ຂ້າໃຊ້ຂອງເພິ່ນ) ເຖິງການເດີນທາງທັງໝົດຂອງບັນພະບຸລຸດຂອງພວກເພິ່ນໃນຖິ່ນແຫ້ງແລ້ງກັນດານ, ແລະ ຄວາມທຸກຍາກລຳບາກດ້ວຍຄວາມອຶດຫິວ ແລະ ກະຫາຍນ້ຳທັງໝົດຂອງເຂົາເຈົ້າ, ພ້ອມທັງການເດີນທາງຂອງເຂົາເຈົ້າ ແລະ ອື່ນໆ.

38 ແລະ ລາວໄດ້ເລົ່າໃຫ້ພວກເພິ່ນຟັງກ່ຽວກັບການກະບົດຂອງເລມັນ ແລະ ເລມູເອນ, ແລະ ພວກລູກຊາຍຂອງອິດຊະມາເອນນຳອີກ, ແທ້ຈິງແລ້ວ, ລາວໄດ້ເລົ່າໃຫ້ພວກເພິ່ນຟັງເຖິງການກະບົດທັງໝົດຂອງພວກເຂົາ; ແລະ ລາວໄດ້ຊີ້ແຈງໃຫ້ພວກເພິ່ນຟັງເຖິງເລື່ອງບັນທຶກ ແລະ ພຣະຄຳພີທັງໝົດນັບຕັ້ງແຕ່ເວລາທີ່ລີໄຮອອກມາຈາກເຢຣູຊາເລັມມາຈົນເຖິງເວລານີ້.

39 ແຕ່ຍັງບໍ່ທັນໝົດ; ເພາະວ່າລາວໄດ້ຊີ້ແຈງແກ່ພວກເພິ່ນເຖິງ [ກ]ແຜນແຫ່ງການໄຖ່, ຊຶ່ງໄດ້ຕຽມໄວ້ນັບຕັ້ງແຕ່ການວາງຮາກຖານຂອງໂລກ; ແລະ ລາວໄດ້ໃຫ້ພວກເພິ່ນຮູ້ຈັກອີກກ່ຽວກັບການສະເດັດມາຂອງພຣະຄຣິດ ແລະ ວຽກງານທັງໝົດຂອງພຣະຜູ້ເປັນເຈົ້າ.

40 ແລະ ເຫດການໄດ້ບັງເກີດຂຶ້ນຄືຫລັງຈາກລາວໄດ້ເວົ້າ ແລະ ຊີ້ແຈງເລື່ອງທັງໝົດນີ້ແກ່ກະສັດແລ້ວ, ແລະ ກະສັດກໍເຊື່ອໃນຄຳເວົ້າທັງໝົດຂອງລາວ.

41 ແລະ ເພິ່ນໄດ້ເລີ່ມຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ໂດຍກ່າວວ່າ: ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງໂຜດເມດຕາຕາມ [ກ]ພຣະເມດຕາອັນອຸດົມສົມບູນຂອງພຣະອົງ ຊຶ່ງເຄີຍມີແກ່ຜູ້ຄົນຂອງນີໄຟມາແລ້ວ, ຂໍຈົ່ງມີແກ່ຂ້ານ້ອຍ ແລະ ຜູ້ຄົນຂອງຂ້ານ້ອຍດ້ວຍເຖີດ.

42 ແລະ ບັດນີ້, ເມື່ອເພິ່ນເວົ້າດັ່ງນີ້ແລ້ວ, ເພິ່ນກໍລົ້ມລົງຢູ່ກັບພື້ນດິນຄືກັບຕາຍແລ້ວ.

43 ແລະ ເຫດການໄດ້ບັງເກີດຂຶ້ນຄືພວກຂ້າໃຊ້ໄດ້ຫາມກະສັດໄປຫາມະເຫສີຂອງເພິ່ນ, ແລະ ວາງເພິ່ນໄວ້ເທິງຕຽງ; ແລະ ເພິ່ນໄດ້ນອນຢູ່ຄືກັບຕາຍແລ້ວເປັນເວລາສອງມື້ສອງຄືນ; ແລະ ມະເຫສີ, ແລະ ພວກລູກຊາຍ, ແລະ ພວກລູກສາວຂອງເພິ່ນໄດ້ໄວ້ທຸກນຳເພິ່ນຕາມປະເພນີຂອງຊາວເລມັນ, ແລະ ຄ່ຳຄວນຢ່າງໃຫຍ່ຫລວງໃນການສູນເສຍເພິ່ນໄປ.

## ບົດທີ 19

*ລາໂມໄນໄດ້ຮັບຄວາມສະຫວ່າງແຫ່ງຊີວິດອັນເປັນນິດ ແລະ ເຫັນພຣະຜູ້ໄຖ່—ຄົນໃນວັງຂອງເພິ່ນຕົກສະເງີ້ ແລະ ຫລາຍຄົນເຫັນເຫລົ່າທູດ—ອຳໂມນໄດ້ຖືກໄວ້ຊີວິດ*

35 *ຂ* ຄມພ ຄວາມຮູ້.
36 *ກ* ມຊຢ 1:4; ແອວ 22:12; 37:9.
*ຂ* ຄມພ ພຣະຄຳພີ.
*ຄ* ກຈກ 3:18–21.
39 *ກ* ຄມພ ແຜນແຫ່ງການໄຖ່.
41 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.

*ຢ່າງມະຫັດສະຈັນ—ລາວ ໄດ້ບັບຕິສະມາ
ຫລາຍຄົນ ແລະ ໄດ້ສະຖາປະນາສາດສະ
ໜາຈັກຂຶ້ນ ໃນບັນດາພວກເຂົາ. ປະມານ
90 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກສອງມື້ກັບສອງຄືນ ແລະ ພວກເຂົາ
ເກືອບຈະເອົາຮ່າງກາຍຂອງກະສັດໄປວາງ
ໄວ້ໃນຖ້ຳ ຊຶ່ງພວກເຂົາເຮັດໄວ້ເພື່ອຈຸດ
ປະສົງໃນການຝັງສົບ.
2 ບັດນີ້ລາຊິນີ ໂດຍທີ່ໄດ້ຍິນຊື່ສຽງຂອງ
ອຳໂມນ, ສະນັ້ນ ນາງຈຶ່ງສົ່ງຄົນໄປ ແລະ
ປາດຖະໜາໃຫ້ລາວມາຫານາງ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື
ອຳໂມນໄດ້ກະທຳຕາມຄຳສັ່ງ ແລະ ໄດ້
ເຂົ້າໄປຫາເລາຊິນີເພື່ອຢາກຮູ້ວ່ານາງປາດ
ຖະໜາໃຫ້ລາວເຮັດສິ່ງໃດ.
4 ແລະ ນາງໄດ້ເວົ້າກັບລາວວ່າ: ຂ້າໃຊ້
ຂອງສາມີຂອງຂ້າພະເຈົ້າເຮັດໃຫ້ເປັນທີ່ຮູ້
ຈັກແກ່ຂ້າພະເຈົ້າວ່າ ເຈົ້າເປັນ [ກ]ສາດສະ
ດາຂອງພຣະເຈົ້າຜູ້ບໍລິສຸດອົງໜຶ່ງ, ແລະ
ວ່າເຈົ້າມີອຳນາດທີ່ຈະເຮັດວຽກອັນຍິ່ງໃຫຍ່
ຫລາຍຢ່າງໃນພຣະນາມຂອງພຣະອົງ;
5 ສະນັ້ນ, ຖ້າຫາກເປັນແນວນັ້ນແທ້, ຂ້າ
ພະເຈົ້າຢາກໃຫ້ເຈົ້າເຂົ້າໄປເບິ່ງສາມີຂອງ
ຂ້າພະເຈົ້າ, ເພາະວ່າເພິ່ນໄດ້ນອນຢູ່ເທິງ
ຕຽງຂອງເພິ່ນເປັນເວລາສອງມື້ສອງຄືນ
ແລ້ວ; ແລະ ບາງຄົນເວົ້າວ່າເພິ່ນຍັງບໍ່ທັນ
ຕາຍ, ແຕ່ບາງຄົນກໍເວົ້າວ່າເພິ່ນຕາຍແລ້ວ,
ແລະ ວ່າເພິ່ນມີກິ່ນເໝັນ, ແລະວ່າຄວນຈະ
ເອົາໄປໄວ້ໃນຖ້ຳເສຍ; ແຕ່ສຳລັບຂ້າພະ
ເຈົ້າແລ້ວ ເພິ່ນບໍ່ມີກິ່ນເໝັນເລີຍ.
6 ບັດນີ້, ເປັນສິ່ງທີ່ອຳໂມນປາດຖະ
ໜາ, ເພາະວ່າລາວຮູ້ວ່າກະສັດລາໂມໄນ
ຢູ່ພາຍໃຕ້ອຳນາດຂອງພຣະເຈົ້າ; ລາວຮູ້
ຈັກວ່າ [ກ]ມ່ານອັນມືດມົວແຫ່ງຄວາມບໍ່ເຊື່ອ
ຖືຖືກໂຍນຖິ້ມໄປຈາກຈິດໃຈຂອງເພິ່ນ
ແລ້ວ, ແລະ ຄວາມສະຫວ່າງຊຶ່ງເຮັດໃຫ້
ຈິດໃຈຂອງເພິ່ນແຈ້ງ [ຂ]ສະຫວ່າງ ຊຶ່ງເປັນ
ແສງສະຫວ່າງແຫ່ງລັດສະໝີພາບຂອງ
ພຣະເຈົ້າ, ຊຶ່ງເປັນແສງສະຫວ່າງອັນໜ້າ
ອັດສະຈັນໃຈແຫ່ງພຣະກະລຸນາທິຄຸນຂອງ
ພຣະອົງ—ແທ້ຈິງແລ້ວ, ແສງສະຫວ່າງນີ້
ໄດ້ນຳຄວາມສຸກເຂົ້າໄປໃນຈິດວິນຍານ
ຂອງເພິ່ນ, ໂດຍທີ່ເມກແຫ່ງຄວາມມືດມົວ
ຖືກປັດອອກໄປແລ້ວ, ແລະ ວ່າຄວາມສະ
ຫວ່າງແຫ່ງຊີວິດອັນເປັນນິດ ໄດ້ຮຸ່ງເຮືອງ
ຢູ່ໃນຈິດວິນຍານຂອງເພິ່ນ, ແທ້ຈິງແລ້ວ,
ລາວຮູ້ຈັກວ່າສິ່ງເຫລົ່ານີ້ເຮັດໃຫ້ຮ່າງກາຍ
ທຳມະຊາດຂອງເພິ່ນໝົດກຳລັງ, ແລະ
ເພິ່ນຈຶ່ງຖືກພາໄປຫາພຣະເຈົ້າ—
7 ສະນັ້ນ, ສິ່ງທີ່ລາຊິນີປາດຖະໜາຈາກ
ລາວກໍຄືສິ່ງທີ່ລາວປາດຖະໜາຢາກຈະ
ເຮັດ. ສະນັ້ນ, ລາວຈຶ່ງເຂົ້າໄປເບິ່ງກະສັດ
ຕາມຄວາມປາດຖະໜາຂອງລາຊິນີ; ແລະ
ລາວໄດ້ເຫັນກະສັດ ແລະ ຮູ້ວ່າເພິ່ນບໍ່ໄດ້
ຕາຍ.
8 ແລະ ລາວໄດ້ເວົ້າກັບລາຊິນີວ່າ: ເພິ່ນ
ບໍ່ໄດ້ຕາຍດອກ, ແຕ່ເພິ່ນນອນຫລັບຢູ່ກັບ
ພຣະເຈົ້າ, ແລະ ໃນມື້ອື່ນ ເພິ່ນກໍຈະລຸກ
ຂຶ້ນ; ສະນັ້ນ ຢ່າຟ້າວຝັງເພິ່ນເທື່ອ.
9 ແລະ ອຳໂມນ ໄດ້ຖາມນາງວ່າ: ທ່ານ
ເຊື່ອເລື່ອງນີ້ບໍ? ແລະ ນາງຕອບວ່າ: ຂ້າ
ພະເຈົ້າບໍ່ມີພະຍານນອກຈາກຄຳເວົ້າຂອງ
ເຈົ້າ, ແລະ ຄຳເວົ້າຂອງຂ້າໃຊ້ເຫລົ່ານັ້ນ
ຂອງຂ້າພະເຈົ້າ; ເຖິງຢ່າງໃດກໍຕາມ ຂ້າ
ພະເຈົ້າຍັງເຊື່ອວ່າມັນຕ້ອງເປັນໄປຕາມຄຳ
ເວົ້າຂອງເຈົ້າ.

**19** 4*ກ* ຄມພ ສາດສະດາ.
6*ກ* 2 ກຣທ 4:3–4.
ຄມພ ມ່ານ.
*ຂ* ຄມພ ຄວາມສະຫວ່າງ,
ຄວາມສະຫວ່າງ
ຂອງພຣະຄຣິດ.

10 ແລະ ອຳໂມນ ໄດ້ ກ່າວ ກັບ ນາງ ວ່າ:
ທ່ານ ເປັນ ສຸກ ແລ້ວ ເພາະ ສັດທາ ອັນ ແຮງ
ກ້າ ຂອງ ທ່ານ; ຂ້ານ້ອຍກ່າວກັບທ່ານວ່າ,
ບໍ່ ເຄີຍ ມີ ແມ່ ຍິງ ທີ່ ມີ [ກ]ສັດທາອັນຍິ່ງໃຫຍ່
ແບບນີ້ເລີຍໃນບັນດາຜູ້ຄົນຂອງຊາວນີໄຟ
ທັງໝົດ.
11 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ນາງໄດ້ເຝົ້າຢູ່ຂ້າງຕຽງຂອງສາມີຂອງນາງ
ນັບ ແຕ່ ເວລານັ້ນ, ຈົນ ຮອດ ມື້ ອື່ນ ຕາມທີ່
ອຳໂມນກຳນົດໄວ້ວ່າກະສັດຈະລຸກຂຶ້ນ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ລຸກຂຶ້ນຕາມຄຳເວົ້າຂອງອຳໂມນ; ແລະ
ເວລາທີ່ເພິ່ນລຸກຂຶ້ນມາ ເພິ່ນໄດ້ເດ່ມືອອກ
ໄປຫາຜູ້ຍິງນັ້ນ, ແລະ ກ່າວວ່າ: ຂໍພຣະ
ນາມຂອງພຣະເຈົ້າຈົ່ງພຣະກະເສີມສຳ
ລານເຖີດ, ແລະ ນາງເປັນສຸກແລ້ວ.
13 ເພາະແນ່ນອນດັ່ງທີ່ນາງມີຊີວິດ, ຈົ່ງ
ເບິ່ງ, ຂ້າພະເຈົ້າໄດ້ເຫັນພຣະຜູ້ໄຖ່ຂອງຂ້າ
ພະເຈົ້າແລ້ວສັນນັ້ນ, ແລະ ພຣະອົງກໍຈະ
ສະເດັດມາ ແລະ [ກ]ກຳເນີດຈາກ [ຂ]ຍິງຄົນ
ໜຶ່ງ, ແລະ ພຣະອົງຈະໄຖ່ມະນຸດທັງໝົດ
ຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ. ບັດ
ນີ້, ເມື່ອເພິ່ນກ່າວຂໍ້ຄວາມນີ້ແລ້ວ, ໃຈຂອງ
ເພິ່ນກໍພອງຂຶ້ນຢູ່ພາຍໃນ ແລະ ເພິ່ນກໍລົ້ມ
ຟຸບລົງດ້ວຍຄວາມສຸກ; ແລະ ລາຊີນີກໍລົ້ມ
ລົງນຳກັນ, ຊຶ່ງໝົດກຳລັງໂດຍພຣະວິນ
ຍານ.
14 ບັດນີ້ອຳໂມນ ໂດຍທີ່ເຫັນພຣະວິນ
ຍານຂອງພຣະຜູ້ເປັນເຈົ້າໄດ້ຖອກເທລົງ
ມາຕາມ [ກ]ຄຳອະທິຖານຂອງລາວ ເທິງຊາວ
ເລມັນພີ່ນ້ອງຂອງລາວ, ຜູ້ເປັນເຫດຂອງ
ຄວາມເປັນທຸກຢ່າງສາຫັດໃນບັນດາຊາວ
ນີໄຟ, ຫລື ວ່າໃນບັນດາຜູ້ຄົນທັງໝົດຂອງ
ພຣະເຈົ້າ ເພາະວ່າຄວາມຊົ່ວຮ້າຍຂອງ
ພວກເຂົາ ແລະ [ຂ]ຮີດຄອງປະເພນີຂອງ
ພວກເຂົາ, ລາວຈຶ່ງຄຸເຂົ່າລົງ, ແລະ ເລີ່ມ
ຖອກເທຈິດວິນຍານຂອງລາວໃນການອະ
ທິຖານ ແລະ ຖວາຍການຂອບພຣະໄທ
ພຣະເຈົ້າສຳລັບສິ່ງທີ່ພຣະອົງໄດ້ກະທຳຕໍ່
ພີ່ນ້ອງຂອງລາວ; ແລະ ຕົວລາວເອງກໍໝົດ
ກຳລັງໄປດ້ວຍ [ຄ]ຄວາມສຸກ; ແລະ ຄົນທັງ
ສາມກໍ [ງ]ລົ້ມຟຸບລົງຢູ່ກັບພື້ນດິນແບບນັ້ນ.
15 ບັດນີ້, ພວກຂ້າໃຊ້ຂອງກະສັດເຫັນ
ວ່າພວກເພິ່ນລົ້ມລົງຢູ່, ພວກເຂົາຈຶ່ງເລີ່ມ
ຮ້ອງທູນຕໍ່ພຣະເຈົ້າຄືກັນ, ເພາະຄວາມ
ຢ້ານກົວພຣະຜູ້ເປັນເຈົ້າໄດ້ເກີດກັບພວກ
ເຂົາຄືກັນ, ເພາະ [ກ]ພວກເຂົາເປັນຜູ້ທີ່ໄດ້
ຢືນຢັນຕໍ່ກະສັດ ແລະ ເປັນພະຍານກ່ຽວ
ກັບອຳນາດອັນຍິ່ງໃຫຍ່ຂອງອຳໂມນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ເອີ້ນຫາພຣະນາມຂອງພຣະຜູ້
ເປັນເຈົ້າດ້ວຍກຳລັງຂອງພວກເຂົາຈົນວ່າ
ພວກເຂົາທັງໝົດລົ້ມລົງຢູ່ກັບພື້ນດິນຄືກັນ,
ນອກຈາກແມ່ຍິງຊາວເລມັນຜູ້ດຽວເທົ່າ
ນັ້ນ, ຜູ້ຊື່ວ່າ ເອບິດ, ໂດຍທີ່ນາງໄດ້ປ່ຽນໃຈ
ເຫລື້ອມໃສໃນພຣະຜູ້ເປັນເຈົ້າຫລາຍປີມາ
ແລ້ວເນື່ອງມາຈາກພາບນິມິດອັນແປກປະ
ຫລາດຈາກບິດາຂອງນາງ—
17 ໂດຍທີ່ປ່ຽນໃຈເຫລື້ອມໃສໃນພຣະຜູ້
ເປັນເຈົ້າແນວນີ້, ແລະ ບໍ່ເຄີຍເຮັດໃຫ້ຜູ້ໃດ
ຮູ້ຈັກ, ສະນັ້ນ, ເມື່ອນາງເຫັນພວກຂ້າໃຊ້
ຂອງລາໂມໄນທຸກຄົນລົ້ມລົງຢູ່ກັບພື້ນດິນ,

10 ກ ລກ 7:9.
ຄມພ ສັດທາ.
13 ກ ຄມພ ພຣະເຢຊູຄຣິດ—
ການທຳນາຍກ່ຽວກັບ
ການກຳເນີດ ແລະ
ການສິ້ນພຣະຊົນຂອງ
ພຣະເຢຊູຄຣິດ.
ຂ 1 ນຟ 11:13–21.
14 ກ ຄພ 42:14.
ຂ ມຊຢ 1:5.
ຄ ຄມພ ຊື່ນຊົມ,
ຄວາມຊື່ນຊົມ.
ງ ແອວ 27:17.
15 ກ ແອວ 18:1–2.

ແລະ ພ້ອມທັງລາຊີນີ ເຈົ້ານາຍ ຂອງນາງ
ອີກ, ແລະ ກະສັດ, ແລະ ອຳໂມນນອນຢຽດ
ຢູ່ກັບພື້ນດິນ, ນາງກໍຮູ້ວ່າ ມັນເປັນອຳນາດ
ຂອງພຣະເຈົ້າ; ແລະ ນາງຄິດວ່າ ມັນເປັນ
ໂອກາດທີ່ຈະເຮັດໃຫ້ທຸກຄົນຮູ້ວ່າມີຫຍັງ
ເກີດຂຶ້ນກັບພວກເພິ່ນ, ໂດຍພາບນີ້ຍ່ອມ
ຈະ [ກ]ເຮັດໃຫ້ທຸກໆຄົນເຊື່ອຖືໃນອຳນາດ
ຂອງພຣະເຈົ້າ, ສະນັ້ນ ນາງຈຶ່ງໄດ້ແລ່ນໄປ
ຫາແຕ່ລະເຮືອນເພື່ອໃຫ້ທຸກຄົນຮູ້ຈັກ.
18 ແລະ ບັດນີ້ຄົນທັງຫລາຍໄດ້ເລີ່ມມາ
ເຕົ້າໂຮມກັນທີ່ວັງຂອງກະສັດ. ແລະ ໄດ້
ເຮັດໃຫ້ຝູງຊົນຈຳນວນຫລວງຫລາຍແປກ
ປະຫລາດໃຈ, ເມື່ອພວກເຂົາເຫັນກະສັດ,
ແລະ ລາຊີນີ, ແລະ ພວກຂ້າໃຊ້ຂອງພວກ
ເພິ່ນນອນຢຽດຢູ່ກັບພື້ນດິນ, ແລະ ພວກ
ເພິ່ນນອນຢູ່ບ່ອນນັ້ນຄືກັບຕາຍແລ້ວ; ແລະ
ພວກເຂົາເຫັນອຳໂມນນຳອີກ, ແລະ ຈົ່ງ
ເບິ່ງ, ອຳໂມນເປັນຄົນນີໄຟ.
19 ແລະ ບັດນີ້ຜູ້ຄົນເລີ່ມຈົ່ມວ່າໃນບັນ
ດາພວກເຂົາ; ບາງຄົນເວົ້າວ່າເປັນຄວາມ
ຊົ່ວອັນໃຫຍ່ຫລວງທີ່ເກີດກັບພວກເພິ່ນ,
ຫລື ກັບກະສັດ ແລະ ວັງຂອງເພິ່ນ, ເພາະ
ເພິ່ນໄດ້ຮັບເອົາຊາວນີໄຟ [ກ]ມາຢູ່ໃນແຜ່ນ
ດິນ.
20 ແລະ ບາງຄົນກໍຕິຕຽນພວກເພິ່ນ,
ໂດຍກ່າວວ່າ: ກະສັດໄດ້ນຳເອົາຄວາມຊົ່ວ
ນີ້ມາສູ່ວັງຂອງເພິ່ນ, ກໍເພາະວ່າເພິ່ນໄດ້ຂ້າ
ພວກຂ້າໃຊ້ຂອງເພິ່ນ ຜູ້ທີ່ເຮັດໃຫ້ຝູງສັດ
ລ້ຽງຂອງເພິ່ນກະຈັດກະຈາຍໄປທີ່ [ກ]ນ້ຳຊີ
ບັດ.
21 ແລະ ພວກທີ່ໄປຢືນຢູ່ໃກ້ນ້ຳຊີບັດທີ່
ເຮັດໃຫ້ຝູງສັດລ້ຽງຂອງກະສັດ [ກ]ກະຈັດກະ
ຈາຍໄປກໍໄດ້ມາຕິຕຽນ ພວກເພິ່ນນຳອີກ,
ເພາະວ່າພວກເຂົາຄຽດແຄ້ນໃຫ້ອຳໂມນ
ຍ້ອນວ່າພີ່ນ້ອງຂອງພວກເຂົາຈຳນວນໜຶ່ງ
ຖືກລາວຂ້າຖິ້ມທີ່ນ້ຳຊີບັດຂະນະທີ່ລາວກຳ
ລັງປ້ອງກັນຝູງສັດລ້ຽງຂອງກະສັດຢູ່.
22 ບັດນີ້, ຄົນຜູ້ໜຶ່ງຂອງພວກເຂົາ ຊຶ່ງ
ອ້າຍນ້ອງຂອງລາວຖືກ [ກ]ຂ້າດ້ວຍດາບ
ຂອງອຳໂມນ, ໂດຍທີ່ມີຄວາມຄຽດແຄ້ນ
ຫລາຍທີ່ສຸດ ໃຫ້ອຳໂມນ ຈຶ່ງໄດ້ຖອດ
ດາບຂອງຕົນ ແລະ ອອກໄປເພື່ອຈະຟັນ
ອຳໂມນ ເພື່ອລາວຈະໄດ້ຂ້າລາວຖິ້ມເສຍ;
ແລະ ເວລາທີ່ລາວຍົກດາບຂຶ້ນເພື່ອຈະຟັນ
ອຳໂມນນັ້ນ, ຈົ່ງເບິ່ງ, ລາວກໍລົ້ມລົງຕາຍ.
23 ບັດນີ້ພວກເຮົາເຫັນໄດ້ວ່າອຳໂມນ
ຈະຖືກຂ້າບໍ່ໄດ້, ເພາະວ່າ [ກ]ພຣະຜູ້ເປັນ
ເຈົ້າໄດ້ກ່າວກັບໂມໄຊຢາບິດາຂອງລາວ
ວ່າ: ເຮົາຈະໄວ້ຊີວິດລາວ, ແລະ ມັນຈະ
ເປັນໄປຕາມສັດທາຂອງເຈົ້າ—ສະນັ້ນ,
ໂມໄຊຢາຈຶ່ງ [ຂ]ມອບລູກຊາຍຂອງຕົນໃຫ້
ແກ່ພຣະເຈົ້າ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາຝູງຊົນເຫັນວ່າຄົນຜູ້ນັ້ນ ຊຶ່ງຍົກດາບ
ຂຶ້ນເພື່ອຈະຂ້າອຳໂມນໄດ້ລົ້ມລົງຕາຍ,
ຄວາມຢ້ານກົວກໍເກີດຂຶ້ນກັບພວກເຂົາທັງ
ໝົດ, ແລະ ບໍ່ກ້າຈະເອົາມືໄປແຕະຕ້ອງ
ລາວ ຫລື ຄົນອື່ນໆທີ່ລົ້ມຢູ່ນັ້ນເລີຍ; ແລະ
ພວກເຂົາເລີ່ມແປກໃຈໃນບັນດາພວກເຂົາ
ອີກວ່າ ແມ່ນຫຍັງທີ່ເປັນເຫດຂອງອຳນາດ
ອັນຍິ່ງໃຫຍ່ນີ້ ຫລື ວ່າເລື່ອງທັງໝົດນີ້
ໝາຍຄວາມວ່າແນວໃດ?
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
ຫລາຍຄົນໃນບັນດາພວກເຂົາເວົ້າວ່າ
ອຳໂມນເປັນ [ກ]ພຣະວິນຍານທີ່ຍິ່ງໃຫຍ່
ແລະ ບາງຄົນກໍເວົ້າວ່າ ລາວຖືກພຣະວິນ

17 ກ ມຊຢ 27:14.
19 ກ ແອວ 17:22–23.
20 ກ ແອວ 17:26; 18:7.
21 ກ ແອວ 17:27; 18:3.
22 ກ ແອວ 17:38.
23 ກ ມຊຢ 28:7; ແອວ 17:35.
ຂ ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
25 ກ ແອວ 18:2–5.

ຍານທີ່ຍິ່ງໃຫຍ່ສົ່ງມາ;

26 ແຕ່ບາງຄົນໄດ້ຕິຕຽນຜູ້ຄົນທັງໝົດ, ໂດຍເວົ້າວ່າ ລາວເປັນຜີສາດທີ່ຊາວນີໄຟໄດ້ສົ່ງມາເພື່ອທໍລະມານພວກເຂົາ.

27 ແລະ ບາງຄົນກໍເວົ້າວ່າ ອຳໂມນຖືກພຣະວິນຍານທີ່ຍິ່ງໃຫຍ່ສົ່ງມາເພື່ອເຮັດໃຫ້ພວກເຂົາທຸກທໍລະມານ ເພາະວ່າຄວາມຊົ່ວຮ້າຍຂອງພວກເຂົາ; ແລະ ວ່າຄືພຣະວິນຍານທີ່ຍິ່ງໃຫຍ່ທີ່ຢູ່ກັບຊາວນີໄຟສະເໝີມາທີ່ໄດ້ປົດປ່ອຍພວກນັ້ນອອກຈາກກຳມືຂອງຕົນຕະຫລອດມາ; ແລະ ພວກເຂົາກ່າວວ່າ ນີ້ຄືພຣະວິນຍານທີ່ຍິ່ງໃຫຍ່ທີ່ທຳລາຍຊາວເລມັນ ພີ່ນ້ອງຂອງພວກເຂົາໃຫ້ເສຍຫາຍຢ່າງຫລວງຫລາຍ.

28 ແລະ ການຂັດແຍ້ງເລີ່ມຮຸນແຮງຂຶ້ນແບບນີ້ໃນບັນດາພວກເຂົາ. ແລະ ໃນຂະນະທີ່ພວກເຂົາກຳລັງຜິດຖຽງກັນຢູ່ນັ້ນ, [ກ]ຜູ້ຍິງຂ້າໃຊ້ຊຶ່ງໄດ້ອອກໄປປ່າວປະກາດໃຫ້ຜູ້ຄົນມາຊຸມນຸມກັນກໍມາຮອດ, ແລະ ເມື່ອນາງເຫັນການຜິດຖຽງກັນທີ່ຮຸນແຮງໃນຝູງຊົນ ນາງກໍເສົ້າສະຫລົດໃຈຫລາຍຈົນວ່ານ້ຳຕາໄຫລອອກມາ.

29 ແລະ ເຫດການໄດ້ບັງເກີດຂຶ້ນຄື ນາງໄດ້ຈັບມືຂອງລາຊີນີເພື່ອນາງຈະໄດ້ຍົກນາງຂຶ້ນຈາກພື້ນ, ແລະ ທັນທີທີ່ນາງແຕະຕ້ອງມືຂອງນາງ, ນາງກໍລຸກຢືນຂຶ້ນດ້ວຍຕົວເອງ, ແລະ ຮ້ອງຂຶ້ນດ້ວຍສຽງອັນດັງ, ມີຄວາມວ່າ: ໂອ້ ພຣະເຢຊູຜູ້ຊົງມີບາລະມີເອີຍ, ຜູ້ຊ່ວຍຂ້ານ້ອຍໃຫ້ລອດຈາກນະລົກ [ກ]ອັນເປັນຕາຢ້ານ! ໂອ້ ພຣະເຈົ້າຜູ້ຊົງມີບາລະມີເອີຍ, ຂໍຈົ່ງໂປດ [ຂ]ເມດຕາປານີຜູ້ຄົນພວກນີ້ດ້ວຍເຖີດ!

30 ແລະ ເວລານາງກ່າວດັ່ງນັ້ນແລ້ວ, ນາງກໍຕົບມືເຕັ້ນໄປດ້ວຍຄວາມສຸກ, ເວົ້າຂໍ້ຄວາມຫລາຍຢ່າງ ຊຶ່ງບໍ່ອາດເຂົ້າໃຈໄດ້; ແລະ ເວລານາງເຮັດສິ່ງນີ້ແລ້ວ, ນາງຈຶ່ງຈັບມືກະສັດລາໂມໄນ ແລະ ຈົ່ງເບິ່ງ, ເພິ່ນໄດ້ລຸກຂຶ້ນ ແລະ ຢືນຂຶ້ນດ້ວຍຕົວເອງ.

31 ແລະ ເວລາເພິ່ນເຫັນການຂັດແຍ້ງໃນບັນດາຜູ້ຄົນຂອງເພິ່ນແລ້ວ, ເພິ່ນໄດ້ອອກໄປທັນທີ ແລະ ເລີ່ມຕົ້ນຕິຕຽນພວກເຂົາ, ແລະ ສິດສອນພວກເຂົາເຖິງ [ກ]ຄຳເວົ້າທີ່ເພິ່ນໄດ້ຍິນຈາກປາກຂອງອຳໂມນ, ແລະ ຫລາຍຄົນທີ່ໄດ້ຍິນກໍເຊື່ອຖື ແລະ ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ.

32 ແລະ ມີຫລາຍຄົນໃນບັນດາພວກເຂົາທີ່ບໍ່ຍອມຟັງຄຳເວົ້າຂອງເພິ່ນ; ສະນັ້ນພວກເຂົາຈຶ່ງແຕກກັນໄປຕາມທາງຂອງພວກເຂົາ.

33 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາອຳໂມນລຸກຂຶ້ນ ລາວກໍໄດ້ປະຕິບັດສາດສະໜາກິດແກ່ພວກເຂົາພ້ອມທັງພວກຂ້າໃຊ້ທັງໝົດຂອງລາໂມໄນນຳອີກ, ແລະ ຄົນທັງໝົດນັ້ນໄດ້ປະກາດເລື່ອງດຽວກັນນີ້ແກ່ຜູ້ຄົນ—ວ່າພວກເຂົາໄດ້ [ກ]ປ່ຽນໃຈແລ້ວ ແລະ ບໍ່ປາດຖະໜາຈະເຮັດ [ຂ]ຄວາມຊົ່ວອີກຕໍ່ໄປ.

34 ແລະ ຈົ່ງເບິ່ງ, ຫລາຍຄົນໄດ້ປະກາດແກ່ຜູ້ຄົນວ່າ ພວກເຂົາໄດ້ເຫັນ [ກ]ເຫລົ່າທູດ ແລະ ໄດ້ສົນທະນາກັບພວກເພິ່ນ; ແລະ ພວກເພິ່ນໄດ້ບອກເຖິງເລື່ອງຂອງພຣະເຈົ້າ, ແລະ ເຖິງຄວາມຊອບທຳຂອງພຣະອົງ.

35 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີຫລາຍຄົນໄດ້ເຊື່ອໃນຄຳເວົ້າຂອງພວກເພິ່ນ; ແລະ ຫລາຍຕໍ່ຫລາຍຄົນທີ່ເຊື່ອກໍ

28 *ກ* ແອວ 19:16.
29 *ກ* 1 ນຟ 14:3.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
31 *ກ* ແອວ 18:36–39.
33 *ກ* ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.
*ຂ* ມຊຢ 5:2; ແອວ 13:12.
34 *ກ* ຄມພ ທູດ, ເທວະດາ.

ໄດ້ຮັບ [ກ]ບັບຕິສະມາ; ແລະ ພວກເຂົາຈຶ່ງ
ກັບມາເປັນຄົນທີ່ຊອບທຳ, ແລະ ພວກເຂົາ
ໄດ້ສະຖາປະນາສາດສະໜາຈັກບ່ອນໜຶ່ງ
ຂຶ້ນໃນບັນດາພວກເຂົາ.

36 ແລະ ວຽກງານຂອງພຣະຜູ້ເປັນເຈົ້າ
ໄດ້ເລີ່ມຂຶ້ນໃນບັນດາຊາວເລມັນແບບນີ້;
ພຣະຜູ້ເປັນເຈົ້າໄດ້ເລີ່ມຖອກເທພຣະວິນ
ຍານຂອງພຣະອົງລົງມາເທິງພວກເຂົາ
ແນວນີ້; ແລະ ພວກເຮົາຮູ້ວ່າພຣະຫັດຂອງ
ພຣະອົງເດ່ອອກມາຫາຄົນ [ກ]ທັງປວງຜູ້ທີ່
ຈະກັບໃຈ ແລະ ເຊື່ອໃນພຣະນາມຂອງ
ພຣະອົງ.

## ບົດທີ 20

*ພຣະຜູ້ເປັນເຈົ້າສົ່ງອຳໂມນໄປຫາເມືອງ
ມິດໂດໄນ ເພື່ອປົດປ່ອຍອ້າຍນ້ອງຂອງ
ລາວທີ່ຖືກກັກຂັງ—ອຳໂມນ ແລະ ລາ
ໂມໄນພົບກັບບິດາຂອງລາໂມໄນ ຜູ້ເປັນ
ກະສັດປົກຄອງທົ່ວແຜ່ນດິນ—ອຳໂມນບັງ
ຄັບໃຫ້ກະສັດຜູ້ແກ່ຊະລາອະນຸຍາດໃຫ້
ປົດປ່ອຍອ້າຍນ້ອງຂອງລາວ. ປະມານ 90
ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກເຂົາເຈົ້າໄດ້ສະຖາປະນາສາດສະໜາ
ຈັກຂຶ້ນໃນແຜ່ນດິນແລ້ວ, ກະສັດລາໂມ
ໄນປາດຖະໜາໃຫ້ອຳໂມນໄປຫາແຜ່ນດິນ
ນີໄຟກັບເພິ່ນ ເພື່ອຈະໄດ້ແນະນຳລາວໃຫ້
ບິດາຂອງເພິ່ນຮູ້ຈັກ.

2 ແລະ ສຸລະສຽງຂອງພຣະຜູ້ເປັນເຈົ້າ
ໄດ້ມາເຖິງອຳໂມນ, ມີຄວາມວ່າ: ເຈົ້າບໍ່
ຕ້ອງຂຶ້ນໄປຫາແຜ່ນດິນນີໄຟ, ເພາະວ່າຈົ່ງ
ເບິ່ງ, ກະສັດພະຍາຍາມຈະເອົາຊີວິດຂອງ
ເຈົ້າ; ແຕ່ໃຫ້ເຈົ້າໄປຫາແຜ່ນດິນມິດໂດ
ໄນ; ເພາະວ່າຈົ່ງເບິ່ງ, ອ້າຍນ້ອງຂອງເຈົ້າ,
ອາໂຣນ, ແລະ ມິວໂລໄຄ ແລະ ອາມມາ
ຖືກຂັງຄຸກຢູ່ບ່ອນນັ້ນ.

3 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ອຳໂມນໄດ້ຍິນເລື່ອງນີ້ແລ້ວ, ລາວໄດ້ເວົ້າ
ກັບກະສັດລາໂມໄນວ່າ: ຈົ່ງເບິ່ງ, ອ້າຍນ້ອງ
ຂອງຂ້ານ້ອຍຖືກຂັງຄຸກຢູ່ແຜ່ນດິນມິດໂດ
ໄນ, ແລະ ຂ້ານ້ອຍຈະໄປປົດປ່ອຍພວກ
ເຂົາ.

4 ແລະ ລາໂມໄນເວົ້າກັບອຳໂມນວ່າ: ຂ້າ
ພະເຈົ້າຮູ້ວ່າດ້ວຍ [ກ]ພະລັງຂອງພຣະຜູ້ເປັນ
ເຈົ້າ ເຈົ້າຈະເຮັດທຸກສິ່ງທຸກຢ່າງໄດ້. ແຕ່ຈົ່ງ
ເບິ່ງ, ຂ້າພະເຈົ້າຈະໄປກັບເຈົ້າເພື່ອໄປຫາ
ແຜ່ນດິນມິດໂດໄນ; ເພາະວ່າກະສັດຂອງ
ແຜ່ນດິນມິດໂດໄນ, ທີ່ຊື່ວ່າ ອານທິອອມ
ໂນ ເປັນເພື່ອນກັບຂ້າພະເຈົ້າ; ສະນັ້ນ ຂ້າ
ພະເຈົ້າຈະໄປຫາແຜ່ນດິນມິດໂດໄນ, ເພື່ອ
ຈະເວົ້າກັນໂດຍດີກັບກະສັດຂອງແຜ່ນດິນ
ນັ້ນ, ເພື່ອເພິ່ນຈະໄດ້ປົດປ່ອຍອ້າຍນ້ອງ
ຂອງເຈົ້າອອກຈາກ [ຂ]ຄຸກ. ບັດນີ້ລາໂມໄນ
ໄດ້ຖາມອຳໂມນວ່າ: ແມ່ນໃຜບອກເຈົ້າວ່າ
ອ້າຍນ້ອງຂອງເຈົ້າຢູ່ໃນຄຸກ?

5 ແລະ ອຳໂມນຕອບກະສັດວ່າ: ບໍ່ມີຜູ້
ໃດບອກຂ້ານ້ອຍດອກ, ນອກຈາກຈະເປັນ
ພຣະເຈົ້າ; ແລະ ພຣະອົງໄດ້ກ່າວກັບຂ້າ
ນ້ອຍວ່າ—ຈົ່ງໄປປົດປ່ອຍອ້າຍນ້ອງຂອງ
ເຈົ້າ, ເພາະພວກເຂົາຖືກຂັງຄຸກຢູ່ໃນແຜ່ນ
ດິນມິດໂດໄນ.

6 ບັດນີ້ ເມື່ອກະສັດລາໂມໄນໄດ້ຍິນ
ເລື່ອງນີ້ແລ້ວ ເພິ່ນໄດ້ສັ່ງໃຫ້ຂ້າໃຊ້ຂອງ
ເພິ່ນຕຽມ [ກ]ມ້າ ແລະ ລົດມ້າຂອງເພິ່ນໃຫ້
ພ້ອມ.

35 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
36 *ກ* 2 ນຟ 26:33; ແອວ 5:33.
**20** 4 *ກ* ແອວ 26:12.
*ຂ* ແອວ 20:28–30.
6 *ກ* ແອວ 18:9–10.

7 ແລະ ເພິ່ນ ກ່າວ ກັບ ອຳໂມນ ວ່າ: ມາ
ເຖີດ, ຂ້າພະເຈົ້າຈະໄປກັບເຈົ້າ ລົງໄປຫາ
ແຜ່ນດິນມິດໂດໄນ, ແລະ ຂ້າພະເຈົ້າຈະ
ວິງວອນກັບກະສັດຢູ່ ເມືອງນັ້ນ ເພື່ອໃຫ້
ປ່ອຍອ້າຍນ້ອງຂອງເຈົ້າອອກຈາກຄຸກ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຂະນະທີ່ອຳໂມນ ແລະ ກະສັດລາໂມໄນກຳ
ລັງເດີນທາງໄປຫາເມືອງນັ້ນ, ທັງສອງກໍໄດ້
ພົບກັບບິດາຂອງລາໂມໄນ, ຜູ້ເປັນກະສັດ
ປົກຄອງ [ກ]ທົ່ວແຜ່ນດິນ.

9 ແລະ ຈົ່ງເບິ່ງ, ບິດາຂອງລາໂມໄນໄດ້
ກ່າວກັບເພິ່ນວ່າ: ດ້ວຍເຫດໃດລູກຈຶ່ງບໍ່ມາ
[ກ]ງານສະຫລອງໃນວັນສຳຄັນນັ້ນ ເວລາທີ່
ບິດາເຮັດການສະຫລອງໃຫ້ລູກຊາຍທຸກ
ຄົນຂອງພໍ່, ແລະ ຜູ້ຄົນຂອງພໍ່?

10 ແລະ ເພິ່ນຍັງໄດ້ຖາມອີກວ່າ: ລູກກຳ
ລັງຈະໄປໃສກັບຊາວນີໄຟຜູ້ນີ້, ຊຶ່ງເປັນລູກ
ຜູ້ໜຶ່ງຂອງຄົນ [ກ]ເວົ້າຕົວະ?

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາ
ໂມໄນໄດ້ເລົ່າເລື່ອງໃຫ້ເພິ່ນຟັງ, ເພາະ
ຢ້ານວ່າເພິ່ນຈະບໍ່ພໍໃຈ.

12 ແລະ ເພິ່ນໄດ້ບອກເພິ່ນອີກເຖິງສາ
ເຫດທັງໝົດຂອງການທີ່ເພິ່ນຕ້ອງຢູ່ໃນລາ
ຊາອານາຈັກຂອງເພິ່ນເອງ ຈຶ່ງບໍ່ໄດ້ໄປຫາ
ບິດາຂອງເພິ່ນໃນງານສະຫລອງ ຊຶ່ງເພິ່ນ
ໄດ້ຕຽມໄວ້.

13 ແລະ ບັດ ນີ້ ເມື່ອ ລາ ໂມ ໄນ ໄດ້ ເລົ່າ
ເລື່ອງທັງໝົດໃຫ້ເພິ່ນຟັງແລ້ວ, ຈົ່ງເບິ່ງ,
ເພິ່ນປະຫລາດໃຈທີ່ບິດາຂອງເພິ່ນໃຈຮ້າຍ
ໃຫ້ເພິ່ນ, ແລະ ກ່າວວ່າ: ລາໂມໄນ, ລູກ
ກຳລັງຈະໄປປົດປ່ອຍຊາວນີໄຟເຫລົ່ານັ້ນ
ຊຶ່ງເປັນລູກຫລານຂອງຄົນເວົ້າຕົວະບໍ. ຈົ່ງ
ເບິ່ງ, ພວກເຂົາໄດ້ລັກເອົາຊັບສົມບັດຂອງ
ບັນພະບຸລຸດຂອງພວກເຮົາໄປ, ແລະ ບັດ
ນີ້ພວກລູກຂອງພວກເຂົາກໍໄດ້ມາຢູ່ກັບ
ບັນດາພວກເຮົາອີກ, ເພື່ອຈະໃຊ້ເລ່ຫລ່ຽມ
ແລະ ການຕົວະຍົວະຂອງພວກເຂົາ, ເພື່ອ
ພວກເຂົາຈະໄດ້ຫລອກລວງພວກເຮົາ,
ເພື່ອພວກເຂົາຈະໄດ້ລັກເອົາຊັບສົມບັດ
ຂອງພວກເຮົາໄປອີກ.

14 ບັດນີ້ບິດາຂອງລາໂມໄນໄດ້ສັ່ງໃຫ້
ເພິ່ນຂ້າອຳໂມນດ້ວຍດາບ. ແລະ ເພິ່ນໄດ້
ສັ່ງເພິ່ນບໍ່ໃຫ້ໄປຫາແຜ່ນດິນມິດໂດໄນນຳ
ອີກ, ແຕ່ໃຫ້ກັບຄືນໄປຫາແຜ່ນດິນ [ກ]ອິດ
ຊະມາເອນກັບເພິ່ນ.

15 ແຕ່ວ່າລາໂມໄນໄດ້ກ່າວກັບເພິ່ນວ່າ:
ລູກຈະບໍ່ຂ້າອຳໂມນ, ແລະ ທັງຈະບໍ່ກັບຄືນ
ໄປຫາແຜ່ນດິນອິດຊະມາເອນຄືກັນ, ແຕ່
ວ່າລູກຈະໄປຫາແຜ່ນດິນມິດໂດໄນເພື່ອ
ຈະໄດ້ປົດປ່ອຍອ້າຍນ້ອງຂອງອຳໂມນ,
ເພາະວ່າລູກຮູ້ວ່າພວກເຂົາເປັນຄົນທ່ຽງ
ທຳ ແລະ ເປັນສາດສະດາຜູ້ບໍລິສຸດຂອງ
ພຣະເຈົ້າອົງແທ້ຈິງ.

16 ບັດນີ້ ເມື່ອ ບິດາ ຂອງ ເພິ່ນ ໄດ້ ຍິນ ຂໍ້
ຄວາມນີ້ແລ້ວ, ເພິ່ນກໍໄດ້ຮ້າຍໃຫ້ເພິ່ນ,
ແລະ ເພິ່ນໄດ້ຖອດດາບຂອງເພິ່ນອອກມາ
ເພື່ອຈະຟັນລູກຂອງເພິ່ນລົງກັບພື້ນດິນ.

17 ແຕ່ວ່າອຳໂມນໄດ້ກ້າວອອກໄປ ແລະ
ເວົ້າກັບເພິ່ນວ່າ: ຈົ່ງເບິ່ງ, ທ່ານບໍ່ຄວນຂ້າ
ລູກຊາຍຂອງທ່ານເອງເລີຍ; ເຖິງຢ່າງໃດ
ກໍຕາມ, ກໍເປັນການ [ກ]ດີກວ່າຖ້າຫາກລາ
ໂມໄນຈະລົ້ມຕາຍແທນທີ່ຈະເປັນຕົວຂອງ
ທ່ານເອງ, ເພາະຈົ່ງເບິ່ງ, ເພິ່ນໄດ້ [ຂ]ກັບໃຈ
ຈາກບາບຂອງເພິ່ນແລ້ວ; ແຕ່ຖ້າຫາກທ່ານ
ລົ້ມຕາຍລົງໃນເວລານີ້, ໃນຄວາມໃຈຮ້າຍ
ຂອງທ່ານ, ຈິດວິນຍານຂອງທ່ານຈະລອດ
ບໍ່ໄດ້.

18 ແລະ ອີກເທື່ອໜຶ່ງ, ມັນສົມຄວນແລ້ວ

8 *ກ* ແອວ 22:1.
9 *ກ* ແອວ 18:9.
10 *ກ* ມຊຢ 10:12–17.
14 *ກ* ແອວ 17:19.
17 *ກ* ແອວ 48:23.
*ຂ* ແອວ 19:12–13.

ທີ່ທ່ານຈະຢຸດກ່ອນ; ເພາະຖ້າຫາກທ່ານ
ກຂ້າລູກຊາຍຂອງທ່ານ ໂດຍທີ່ເພິ່ນເປັນ
ຄົນບໍລິສຸດ, ເລືອດຂອງເພິ່ນຈະຮ້ອງຂຶ້ນ
ຈາກພື້ນດິນທູນພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງເພິ່ນ, ເພື່ອການແກ້ແຄ້ນຈະ
ມາເຖິງທ່ານ; ແລະ ທ່ານອາດຈະສູນເສຍ
ຂຈິດວິນຍານຂອງທ່ານໄປ.
19 ບັດນີ້ເມື່ອອຳໂມນເວົ້າຂໍ້ຄວາມນີ້ກັບ
ເພິ່ນແລ້ວ, ເພິ່ນຕອບລາວ, ໂດຍກ່າວວ່າ:
ຂ້າພະເຈົ້າຮູ້ວ່າ ຖ້າຫາກຂ້າພະເຈົ້າຂ້າລູກ
ຊາຍຂອງຂ້າພະເຈົ້າແລ້ວ ກໍຄືກັບເຮັດໃຫ້
ຜູ້ບໍລິສຸດຕ້ອງຕາຍ; ເພາະວ່າເຈົ້າເອງກໍພະ
ຍາຍາມຈະທຳລາຍລາວຢູ່.
20 ແລະ ເພິ່ນໄດ້ເດ່ມືອອກໄປເພື່ອຈະ
ຂ້າອຳໂມນ. ແຕ່ອຳໂມນຕ້ານທານການ
ຟັນຂອງເພິ່ນໄດ້, ແລະ ຕີແຂນຂອງເພິ່ນ
ເພື່ອເພິ່ນຈະໃຊ້ມັນບໍ່ໄດ້ອີກຕໍ່ໄປ.
21 ບັດນີ້ເມື່ອກະສັດ ເຫັນວ່າອຳໂມນ
ຈະຂ້າຕົນໄດ້, ເພິ່ນຈຶ່ງເລີ່ມວິງວອນໃຫ້
ອຳໂມນໄວ້ຊີວິດຂອງຕົນ.
22 ແຕ່ ອຳໂມນ ໄດ້ຍົກດາບຂອງລາວ
ຂຶ້ນ, ແລະ ກ່າວກັບເພິ່ນວ່າ: ຈົ່ງເບິ່ງ, ຂ້າ
ນ້ອຍຈະຟັນທ່ານເສຍ ຖ້າຫາກທ່ານບໍ່ອະ
ນຸຍາດໃຫ້ພີ່ນ້ອງຂອງຂ້ານ້ອຍໄດ້ຮັບການ
ປົດປ່ອຍອອກຈາກຄຸກ.
23 ບັດນີ້ກະສັດ, ໂດຍທີ່ຢ້ານຕາຍ, ຈຶ່ງ
ກ່າວວ່າ: ຖ້າຫາກເຈົ້າໄວ້ຊີວິດຂອງຂ້າພະ
ເຈົ້າ, ຂ້າພະເຈົ້າຈະອະນຸຍາດໃຫ້ເຈົ້າ ບໍ່
ວ່າອັນໃດກໍຕາມທີ່ເຈົ້າຕ້ອງການຈົນກະທັ້ງ
ເຄິ່ງໜຶ່ງຂອງອານາຈັກຂອງຂ້າພະເຈົ້າ.
24 ບັດນີ້ເມື່ອອຳໂມນເຫັນວ່າ ລາວໄດ້
ກະທຳກັບກະສັດຜູ້ແກ່ຊະລາຕາມຄວາມ
ປາດຖະໜາຂອງລາວແລ້ວ, ລາວຈຶ່ງກ່າວ
ກັບເພິ່ນວ່າ: ຖ້າຫາກທ່ານປົດປ່ອຍອ້າຍ
ນ້ອງຂອງຂ້ານ້ອຍອອກຈາກຄຸກ, ແລະ
ໃຫ້ລາໂມໄນປົກຄອງລາຊາອານາຈັກຂອງ
ເພິ່ນເໝືອນເດີມ, ແລະວ່າທ່ານຈະບໍ່ຄຽດ
ແຄ້ນໃຫ້ເພິ່ນ, ແຕ່ອະນຸຍາດໃຫ້ເພິ່ນເຮັດ
ກສິ່ງໃດກໍຕາມ ຕາມຄວາມປາດຖະໜາ
ຂອງຕົນເອງຕາມຄວາມນຶກຄິດຂອງເພິ່ນ;
ເວລານັ້ນ ຂ້ານ້ອຍຈະໄວ້ຊີວິດຂອງທ່ານ;
ຖ້າບໍ່ດັ່ງນັ້ນ ຂ້ານ້ອຍຈະຟັນທ່ານລົງກັບ
ພື້ນດິນດຽວນີ້.
25 ບັດນີ້ເມື່ອອຳໂມນກ່າວຂໍ້ຄວາມນີ້
ແລ້ວ, ກະສັດກໍມີຄວາມປິຕິຍິນດີ ຍ້ອນວ່າ
ຕົວເອງຍັງມີຊີວິດຢູ່.
26 ແລະ ເມື່ອເຫັນວ່າອຳໂມນບໍ່ປາດຖະ
ໜາຈະທຳລາຍຕົນ, ແລະ ເມື່ອເຫັນຄວາມ
ຮັກອັນແຮງກ້າທີ່ລາວມີຕໍ່ລາໂມໄນ, ລູກ
ຊາຍຂອງເພິ່ນ, ເພິ່ນຈຶ່ງມີຄວາມແປກໃຈ
ຢ່າງຍິ່ງ, ແລະ ກ່າວວ່າ: ຍ້ອນວ່ານີ້ຄືທັງ
ໝົດທີ່ເຈົ້າປາດຖະໜາຄືໃຫ້ຂ້າພະເຈົ້າປົດ
ປ່ອຍອ້າຍນ້ອງຂອງເຈົ້າ ແລະ ຍອມໃຫ້ລາ
ໂມໄນ ລູກຊາຍຂອງຂ້າພະເຈົ້າປົກຄອງ
ລາຊາອານາຈັກຂອງລາວເອງ, ຈົ່ງເບິ່ງ,
ຂ້າພະເຈົ້າຈະອະນຸຍາດໃຫ້ລູກຂອງຂ້າ
ພະເຈົ້າປົກຄອງລາຊາອານາຈັກຂອງລາວ
ເອງນັບຕັ້ງແຕ່ເວລານີ້ ແລະ ຕະຫລອດ
ໄປ; ແລະ ຂ້າພະເຈົ້າຈະບໍ່ບັງຄັບລາວອີກ
ຕໍ່ໄປ—
27 ແລະ ຂ້າພະເຈົ້າຈະອະນຸຍາດໃຫ້
ອ້າຍນ້ອງຂອງເຈົ້າໄດ້ຮັບການປົດປ່ອຍ
ອອກຈາກຄຸກ, ແລະ ໃຫ້ເຈົ້າກັບອ້າຍນ້ອງ
ຂອງເຈົ້າມາຫາຂ້າພະເຈົ້າໃນລາຊາອານາ
ຈັກຂອງຂ້າພະເຈົ້າ; ເພາະວ່າຂ້າພະເຈົ້າ
ປາດຖະໜາທີ່ສຸດທີ່ຈະເຫັນເຈົ້າອີກ. ເພາະ
ວ່າກະສັດມີຄວາມແປກປະຫລາດໃຈຢ່າງ
ໃຫຍ່ຫລວງໃນຄຳເວົ້າຂອງລາວ, ແລະ ຄຳ

18 ກ ຄມພ ຄາດຕະກຳ, ການຄາດຕະກຳ.
ຂ ຄພ 42:18.
24 ກ ແອວ 21:21–22.

ເວົ້າທີ່ລາໂມໄນລູກຊາຍຂອງເພິ່ນນຳອີກ,
ສະນັ້ນ ເພິ່ນຈຶ່ງ [ກ]ປາດຖະໜາທີ່ຈະຮຽນຮູ້
ສິ່ງເຫລົ່ານີ້.
28 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ອຳໂມນກັບລາໂມໄນໄດ້ເດີນທາງຕໍ່ໄປຫາ
ແຜ່ນດິນມິດໂດໄນ. ແລະ ລາໂມໄນ ໄດ້
ເປັນທີ່ໂປດປານໃນສາຍຕາຂອງກະສັດ
ຂອງແຜ່ນດິນນັ້ນ; ສະນັ້ນ ອ້າຍນ້ອງຂອງ
ອຳໂມນຈຶ່ງຖືກປ່ອຍອອກຈາກຄຸກ.
29 ແລະ ເວລາທີ່ອຳໂມນພົບເຫັນພວກ
ເຂົາ, ລາວກໍມີຄວາມເສົ້າສະຫລົດໃຈ
ຫລາຍທີ່ສຸດ, ເພາະຈົ່ງເບິ່ງ, ພວກເຂົາ
ເປືອຍເປົ່າ, ແລະ ຜິວໜັງເປື່ອຍຫລາຍ
ເພາະວ່າພວກເຂົາຖືກມັດດ້ວຍເຊືອກທີ່
ໜັ້ນ. ແລະ ພວກເຂົາຕ້ອງອົດທົນຕໍ່ຄວາມ
ຫິວໂຫຍ, ກະຫາຍນ້ຳ, ແລະ ຄວາມທຸກ
ນາໆປະການ; ເຖິງຢ່າງໃດກໍຕາມ ພວກ
ເຂົາກໍສາມາດ [ກ]ທົນກັບຄວາມທຸກທໍລະ
ມານທັງໝົດຂອງພວກເຂົາໄດ້.
30 ແລະ ມັນໄດ້ເກີດຂຶ້ນໂດຍບັງເອີນວ່າ
ພວກເຂົາຕົກຢູ່ໃນກຳມືຂອງຜູ້ຄົນທີ່ແຂງ
ກະດ້າງຫລາຍ ແລະ ແຂງຄໍຫລາຍ; ສະນັ້ນ
ພວກນີ້ຈຶ່ງບໍ່ຍອມເຊື່ອຟັງຄຳຂອງພວກ
ເຂົາ, ແລະ ພວກນີ້ໄດ້ຂັບໄລ່ພວກເຂົາໄປ
ແລະ ໄດ້ທຸບຕີ ແລະ ຂັບໄລ່ພວກເຂົາອອກ
ຈາກບ້ານໜຶ່ງໄປຫາອີກບ້ານໜຶ່ງ ແລະ
ຈາກບ່ອນໜຶ່ງໄປຫາອີກບ່ອນໜຶ່ງ ຈົນ
ພວກເຂົາມາເຖິງແຜ່ນດິນມິດໂດໄນ, ແລະ
ບ່ອນນັ້ນພວກເຂົາຖືກຈັບ ແລະ ເອົາເຂົ້າ
ຄຸກ ແລະ ຖືກມັດດ້ວຍເຊືອກທີ່ [ກ]ໜັ້ນ ແລະ
ຂັງໄວ້ໃນຄຸກເປັນເວລາຫລາຍມື້, ແລະ ລາ
ໂມໄນກັບອຳໂມນຈຶ່ງໄດ້ມາປົດປ່ອຍພວກ
ເຂົາ.

ເລື່ອງ ລາວ ຂອງ ການ ສັ່ງ ສອນ ຂອງ ອາໂຣນ, ແລະ ມິວໂລໄຄ, ແລະ ອ້າຍນ້ອງ ຂອງລາວໃຫ້ແກ່ຊາວເລມັນ.

*ມີຢູ່ໃນບົດທີ 21 ຈົນເຖິງບົດທີ 25.*

## ບົດທີ 21

*ອາໂຣນສິດສອນຊາວອາມາລະໄຄກ່ຽວກັບພຣະຄຣິດ ແລະ ການຊົດໃຊ້ຂອງພຣະອົງ—ອາໂຣນ ແລະ ອ້າຍນ້ອງຂອງລາວຖືກຂັງຄຸກຢູ່ທີ່ມິດໂດໄນ—ຫລັງຈາກພວກເຂົາຖືກປົດປ່ອຍ, ພວກເຂົາໄດ້ສິດສອນໃນທຳມະສາລາ ແລະ ເຮັດໃຫ້ຫລາຍຄົນປ່ຽນໃຈເຫລື້ອມໃສ—ລາໂມໄນອະນຸຍາດໃຫ້ຜູ້ຄົນໃນແຜ່ນດິນອິດຊະມາເອນມີອິດສະລະພາບໃນການນັບຖືສາດສະໜາ. ປະມານ 90–77 ປີກ່ອນ ຄ.ສ.*

1 ບັດ ນີ້ ເມື່ອອຳໂມນ ແລະ ອ້າຍນ້ອງ
ຂອງລາວໄດ້ [ກ]ແຍກຍ້າຍກັນໄປຫາຊາຍ
ແດນຂອງແຜ່ນດິນຊາວເລມັນ, ຈົ່ງເບິ່ງ
ອາໂຣນໄດ້ອອກເດີນທາງໄປຫາແຜ່ນດິນ
ຊຶ່ງຊາວເລມັນເອີ້ນວ່າເຢຣູຊາເລັມ, ໂດຍ
ເອີ້ນຕາມແຜ່ນດິນບ້ານເກີດເມືອງນອນ
ຂອງບັນພະບຸລຸດຂອງພວກເຂົາ; ແລະ ມັນ
ຢູ່ຫ່າງອອກໄປຕິດກັບຊາຍແດນມໍມອນ.
2 ບັດນີ້ຊາວເລມັນ ແລະ ຊາວອາມາ
ລະໄຄ ແລະ ຜູ້ຄົນຂອງ [ກ]ອະມິວລອນໄດ້
ສ້າງເມືອງໃຫຍ່ເມືອງໜຶ່ງຂຶ້ນ, ຊຶ່ງມີຊື່ວ່າ
ເຢຣູຊາເລັມ.
3 ບັດນີ້ຊາວເລມັນກໍແຂງກະດ້າງພຽງ
ພໍຢູ່ແລ້ວ, ແຕ່ວ່າຊາວອາມາລະໄຄແລະ
ຊາວອະມິວລອນຍິ່ງແຂງກະດ້າງກວ່ານັ້ນ

27 ກ ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
29 ກ ແອວ 17:11.
30 ກ ແອວ 26:29.
**21** 1 ກ ແອວ 17:13, 17.
2 ກ ມຊຢ 24:1; ແອວ 25:4–9.

ອີກ; ສະນັ້ນ ພວກເຂົາຈຶ່ງໄດ້ຍຸຍົງໃຫ້ຊາວ
ເລມັນເຮັດໃຈແຂງກະດ້າງ, ເພື່ອຈະໃຫ້
ເກັ່ງຫລາຍຂຶ້ນ ໃນ ຄວາມຊົ່ວ ຮ້າຍ ແລະ
ຄວາມໜ້າກຽດຊັງຂອງພວກເຂົາ,
4 ແລະ ເຫດ ການ ໄດ້ບັງ ເກີດ ຂຶ້ນ ຄື
ອາໂຣນມາຮອດເມືອງເຢຣູຊາເລັມ, ແລະ
ລາວໄດ້ເລີ່ມຕົ້ນສັ່ງສອນຊາວອາມາລະໄຄ
ກ່ອນ. ແລະ ລາວໄດ້ສັ່ງສອນພວກເຂົາ
ໃນທຳມະສາລາຂອງພວກເຂົາ, ເພາະ
ວ່າພວກເຂົາສ້າງທຳມະສາລາຂຶ້ນຕາມ
[ກ]ລະບຽບຂອງຊາວນີຮໍ; ເພາະວ່າຊາວ
ອາມາລະໄຄ ແລະ ຊາວອະມິວລອນສ່ວນ
ຫລາຍຖືລະບຽບຂອງຊາວນີຮໍ.
5 ສະນັ້ນ, ເວລາອາໂຣນເຂົ້າໄປໃນທຳ
ມະສາລາແຫ່ງໜຶ່ງຂອງພວກເຂົາເພື່ອສັ່ງ
ສອນຜູ້ຄົນ, ແລະ ເວລາທີ່ລາວກຳລັງເວົ້າ
ກັບພວກເຂົາຢູ່ນັ້ນ, ຈົ່ງເບິ່ງ ຊາວອາມາ
ລະໄຄຜູ້ໜຶ່ງລຸກຂຶ້ນ ແລະ ເລີ່ມໂຕ້ຖຽງ
ລາວ, ໂດຍກ່າວວ່າ: ເຈົ້າໃຫ້ຖ້ອຍຄຳເຖິງ
ເລື່ອງອັນໃດ? ເຈົ້າເຄີຍເຫັນ [ກ]ທູດບໍ? ເປັນ
ຫຍັງທູດຈຶ່ງບໍ່ມາປະກົດຕໍ່ພວກເຮົາ? ຫລື ຜູ້
ຄົນພວກນີ້ບໍ່ດີເທົ່າກັບຜູ້ຄົນຂອງເຈົ້າບໍ?
6 ແລະ ເຈົ້າໄດ້ ເວົ້າອີກວ່າ, ຖ້າຫາກ
ພວກເຮົາບໍ່ກັບໃຈ ພວກເຮົາຈະຕາຍ. ເຈົ້າ
ຮູ້ຈັກຄວາມນຶກຄິດ ແລະ ເຈດຕະນາຂອງ
ໃຈຂອງພວກເຮົາໄດ້ແນວໃດ? ເຈົ້າຮູ້ໄດ້
ແນວໃດວ່າ ພວກເຮົາມີເຫດຜົນຈະຕ້ອງ
ກັບໃຈ? ເຈົ້າຮູ້ໄດ້ແນວໃດວ່າ ພວກເຮົາບໍ່
ເປັນຄົນຊອບທຳ? ຈົ່ງເບິ່ງ, ພວກເຮົາໄດ້
ສ້າງບ່ອນລີ້ໄພ, ແລະ ເພື່ອພວກເຮົາຈະ
ໄດ້ມາຊຸມນຸມກັນເພື່ອນະມັດສະການພຣະ
ເຈົ້າ. ພວກເຮົາເຊື່ອວ່າພຣະເຈົ້າຈະຊ່ວຍ
ມະນຸດທັງປວງໃຫ້ລອດ.
7 ບັດ ນີ້ ອາໂຣນ ໄດ້ ຖາມລາວວ່າ: ເຈົ້າ
ເຊື່ອບໍ່ວ່າ ພຣະບຸດຂອງພຣະເຈົ້າຈະສະ
ເດັດ ມາ ໄຖ່ ມະນຸດ ຊາດ ຈາກບາບ ຂອງ
ພວກເຂົາ?
8 ແລະ ຄົນ ຜູ້ ນັ້ນ ຕອບ ລາວ ວ່າ: ພວກ
ເຮົາບໍ່ເຊື່ອວ່າ ເຈົ້າຮູ້ຈັກເລື່ອງແບບນີ້ ແລະ
ພວກເຮົາບໍ່ເຊື່ອໃນຮີດຄອງປະເພນີອັນໂງ່
ຈ້າຫລ້າຫລັງເຫລົ່ານັ້ນ. ພວກເຮົາບໍ່ເຊື່ອ
ວ່າ ເຈົ້າຮູ້ຈັກ [ກ]ສິ່ງທີ່ຈະມາເຖິງ, ທັງພວກ
ເຮົາບໍ່ເຊື່ອວ່າ ບັນພະບຸລຸດຂອງເຈົ້າ ແລະ
ບັນພະບຸລຸດຂອງພວກເຮົາຮູ້ຈັກສິ່ງທີ່ພວກ
ເພິ່ນເວົ້າກ່ຽວກັບສິ່ງທີ່ຈະມາເຖິງ.
9 ບັດນີ້ອາໂຣນເລີ່ມເປີດພຣະຄຳພີໃຫ້
ພວກເຂົາເບິ່ງກ່ຽວກັບການສະເດັດມາ
ຂອງພຣະຄຣິດ, ແລະ ກ່ຽວກັບການຟື້ນຄືນ
ຊີວິດຂອງຄົນຕາຍ, ແລະ ວ່າການໄຖ່ຈະມີ
[ກ]ບໍ່ໄດ້ສຳລັບມະນຸດຊາດນອກຈາກໂດຍ
ທາງການສິ້ນພຣະຊົນ ແລະ ການທົນທຸກ
ທໍລະມານຂອງພຣະຄຣິດ, ແລະ [ຂ]ການຊົດ
ໃຊ້ໂດຍໂລຫິດຂອງພຣະອົງເທົ່ານັ້ນ.
10 ແລະ ເຫດການໄດ້ບັງເກີດຂຶ້ນ ເມື່ອ
ລາວຊີ້ແຈງເລື່ອງເຫລົ່ານີ້ຕໍ່ພວກເຂົາແລ້ວ
ພວກເຂົາກໍຄຽດແຄ້ນໃຫ້ ແລະ ຫົວເຍາະ
ເຍີ້ຍລາວ; ແລະ ພວກເຂົາບໍ່ຍອມຟັງຄຳ
ເວົ້າຂອງລາວເລີຍ.
11 ສະນັ້ນ, ເມື່ອລາວເຫັນວ່າພວກເຂົາ
ບໍ່ຍອມຟັງຄຳເວົ້າຂອງລາວແລ້ວ, ລາວຈຶ່ງ
ອອກຈາກທຳມະສາລາຂອງພວກເຂົາໄປ,
ແລະ ໄປຫາໝູ່ບ້ານບ່ອນໜຶ່ງ ຊຶ່ງມີຊື່ວ່າ
ອານີ-ອານໄທ, ແລະ ບ່ອນນີ້ລາວໄດ້ພົບ
ມິວໂລໄຄ ກຳລັງສັ່ງສອນພຣະຄຳຕໍ່ພວກ
ເຂົາ; ແລະ ອາມມາ ແລະ ອ້າຍນ້ອງຂອງ
ລາວຢູ່ຄືກັນ. ແລະ ພວກເຂົາໄດ້ໂຕ້ຖຽງກັບ
ຫລາຍຄົນກ່ຽວກັບພຣະຄຳ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ

4 *ກ* ແອວ 1:2–15.
5 *ກ* ມຂຍ 27:11–15.
8 *ກ* ຢຄ 7:1–8.
9 *ກ* ມຂຍ 5:8;
ແອວ 38:9.
*ຂ* ຄມພ ຊົດໃຊ້, ການຊົດໃຊ້.

ພວກ ເຂົາ ເຫັນ ວ່າ ຜູ້ ຄົນ ເຮັດ ໃຈ ແຂງ ກະ
ດ້າງ, ສະນັ້ນ ພວກ ເຂົາ ຈຶ່ງ ໄດ້ໜີ ຈາກ ທີ່
ນັ້ນ ແລະ ໄປຫາແຜ່ນດິນມິດໂດໄນ. ແລະ
ພວກເຂົາໄດ້ສັ່ງສອນພຣະຄຳໃຫ້ແກ່ຜູ້ຄົນ
ເປັນຈຳນວນຫລວງຫລາຍ, ແຕ່ມີພຽງເລັກ
ໜ້ອຍເທົ່ານັ້ນທີ່ເຊື່ອໃນຄຳສອນ ຊຶ່ງພວກ
ເຂົາໄດ້ສິດສອນນັ້ນ.

13 ເຖິງ ຢ່າງ ໃດ ກໍ ຕາມ, ອາໂຣນ ແລະ
ອ້າຍນ້ອງຂອງລາວຈຳນວນໜຶ່ງໄດ້ຖືກຈັບ
ແລະ ເອົາເຂົ້າຄຸກ, ແລະ ພວກທີ່ເຫລືອຢູ່ກໍ
ໜີອອກຈາກແຜ່ນດິນມິດໂດໄນໄປສູ່ພາກ
ພື້ນຕ່າງໆໂດຍອ້ອມຮອບ.

14 ແລະ ພວກທີ່ຖືກເອົາເຂົ້າຄຸກໄດ້ຮັບ
ຄວາມ [a]ທຸກທໍລະມານຫລາຍຢ່າງ, ແລະ
ພວກເຂົາໄດ້ຮັບການປົດປ່ອຍດ້ວຍມືຂອງ
ລາໂມໄນກັບອຳໂມນ, ແລະ ພວກເຂົາໄດ້
ກິນເຂົ້າ ແລະ ໄດ້ເຄື່ອງນຸ່ງໃໝ່.

15 ແລະ ພວກເຂົາໄດ້ອອກໄປອີກເພື່ອ
ປະກາດພຣະຄຳ, ແລະ ພວກເຂົາໄດ້ຮັບ
ການປົດປ່ອຍອອກຈາກຄຸກເປັນເທື່ອທຳ
ອິດເຊັ່ນນີ້; ແລະ ພວກເຂົາໄດ້ຮັບທຸກແບບ
ນີ້.

16 ແລະ ພວກເຂົາໄດ້ອອກໄປບ່ອນໃດ
ກໍ ຕາມ ສຸດແລ້ວແຕ່ [a]ພຣະວິນຍານ ຂອງ
ພຣະຜູ້ເປັນເຈົ້າຈະຊີ້ນຳ, ສັ່ງສອນພຣະ
ຄຳຂອງພຣະເຈົ້າໃນທຳມະສາລາທຸກແຫ່ງ
ຂອງຊາວອາມາລະໄຄ, ຫລື ໃນບ່ອນຊຸມ
ນຸມທຸກແຫ່ງຂອງຊາວເລມັນທີ່ພວກເຂົາ
ສາມາດເຂົ້າໄປໄດ້.

17 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະຜູ້ເປັນເຈົ້າໄດ້ເລີ່ມປະທານພອນໃຫ້
ແກ່ພວກເຂົາ, ເຖິງຂະໜາດທີ່ພວກເຂົາໄດ້
ຊັກນຳຜູ້ຄົນເປັນຈຳນວນຫລວງຫລາຍມາ
ສູ່ຄວາມຮູ້ເລື່ອງຄວາມຈິງ; ແທ້ຈິງແລ້ວ,
ພວກເຂົາໄດ້ເຮັດໃຫ້ຜູ້ຄົນເປັນຢ່າງຫລວງ
ຫລາຍ [a]ສຳນຶກເຖິງບາບຂອງພວກເຂົາ,
ແລະ ເຖິງເລື່ອງຮີດຄອງປະເພນີອັນບໍ່ຖືກ
ຕ້ອງຂອງບັນພະບຸລຸດຂອງພວກເຂົາ.

18 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ອຳໂມນກັບລາໂມໄນໄດ້ອອກຈາກແຜ່ນ
ດິນມິດໂດໄນໄປຫາແຜ່ນດິນອິດຊະມາ
ເອນ, ຊຶ່ງເປັນແຜ່ນດິນມູນມໍລະດົກຂອງ
ພວກເພິ່ນ.

19 ແລະ ກະສັດ ລາ ໂມ ໄນ ບໍ່ ຍອມ ໃຫ້
ອຳໂມນຮັບໃຊ້, ຫລື ເປັນຂ້າໃຊ້ຂອງເພິ່ນ
ອີກຕໍ່ໄປ.

20 ແຕ່ເພິ່ນໄດ້ສັ່ງໃຫ້ສ້າງທຳມະສາລາ
ຂຶ້ນໃນແຜ່ນດິນອິດຊະມາເອນ; ແລະ ເພິ່ນ
ໄດ້ ໃຫ້ ຜູ້ຄົນຂອງ ເພິ່ນ ຫລື ຜູ້ຢູ່ພາຍ ໃຕ້
ການປົກຄອງຂອງເພິ່ນມາຊຸມນຸມກັນ.

21 ແລະ ເພິ່ນໄດ້ມີຄວາມປິຕິຍິນດີກັບຜູ້
ຄົນຂອງເພິ່ນ, ແລະ ເພິ່ນໄດ້ສິດສອນພວກ
ເຂົາຫລາຍເລື່ອງ. ແລະ ເພິ່ນໄດ້ປະກາດ
ແກ່ຜູ້ຄົນວ່າ, ພວກເຂົາຢູ່ພາຍໃຕ້ອຳນາດ
ຂອງເພິ່ນ, ແລະ ວ່າພວກເຂົາເປັນອິດສະ
ລະແລ້ວ, ວ່າພວກເຂົາມີອິດສະລະຈາກ
ການກົດຂີ່ຂົ່ມເຫັງຂອງກະສັດຜູ້ເປັນບິດາ
ຂອງເພິ່ນ; ເພາະບິດາຂອງເພິ່ນໄດ້ອະນຸ
ຍາດໃຫ້ເພິ່ນປົກຄອງດູແລຜູ້ຄົນທີ່ຢູ່ໃນ
ແຜ່ນດິນອິດຊະມາເອນ, ແລະ ໃນແຜ່ນດິນ
ທັງໝົດອ້ອມແອ້ມນັ້ນ.

22 ແລະ ເພິ່ນໄດ້ປະກາດແກ່ຜູ້ຄົນອີກ
ວ່າ ພວກເຂົາມີສິດ [a]ເສລີພາບໃນການ
ນະມັດສະການພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຂົາແລ້ວແຕ່ຄວາມ
ປາດຖະໜາຂອງພວກເຂົາ, ໃນສະຖານທີ່
ບ່ອນໃດກໍຕາມແລ້ວແຕ່ທີ່ພວກເຂົາຢູ່, ຖ້າ
ຫາກມັນຢູ່ໃນແຜ່ນດິນຊຶ່ງຢູ່ພາຍໃຕ້ການ

14 *a* ແອວ 20:29.
16 *a* ແອວ 22:1.
17 *a* ຄພ 18:44.
22 *a* ຄພ 134:1–4;
ຫຼຊ 1:11.
ຄມພ ເສລີພາບ.

ປຶກສາຂອງຂອງກະສັດລາໂມໄນ.
23 ແລະ ອຳໂມນໄດ້ສັ່ງສອນຜູ້ຄົນຂອງ
ກະສັດລາ ໂມໄນ; ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ລາວໄດ້ສິດສອນທຸກໆເລື່ອງ
ເຖິງສິ່ງທີ່ກ່ຽວກັບຄວາມຊອບທຳ ແລະ
ລາວໄດ້ແນະນຳພວກເຂົາທຸກໆມື້ດ້ວຍ
ຄວາມພາກພຽນ, ແລະ ພວກເຂົາໄດ້ເອົາ
ໃຈໃສ່ຕໍ່ຄຳເວົ້າຂອງລາວ ແລະ ພວກເຂົາ
ມີຄວາມກະຕືລືລົ້ນໃນການຮັກສາພຣະບັນ
ຍັດຂອງພຣະເຈົ້າ.

## ບົດທີ 22

*ອາໂຣນສິດສອນບິດາຂອງລາໂມໄນກ່ຽວກັບການສ້າງ, ການຕົກຂອງອາດາມ, ແລະ ແຜນແຫ່ງການໄຖ່ໂດຍຜ່ານພຣະຄຣິດ—ກະສັດ ແລະ ທຸກຄົນໃນຄອບຄົວຂອງເພິ່ນໄດ້ປ່ຽນໃຈເຫລື້ອມໃສ—ການອະທິບາຍກ່ຽວກັບແຜ່ນດິນທີ່ແບ່ງແຍກລະຫວ່າງຊາວນີໄຟ ແລະ ຊາວເລມັນ. ປະມານ 90–77 ປີ ກ່ອນ ຄ.ສ.*

1 ບັດນີ້, ໃນຂະນະທີ່ອຳໂມນກຳລັງສິດ
ສອນຜູ້ຄົນຂອງລາໂມໄນເປັນປະຈຳຢູ່ນັ້ນ,
ພວກເຮົາຈະກັບໄປເວົ້າເຖິງເລື່ອງລາວ
ຂອງອາໂຣນ ແລະ ອ້າຍນ້ອງຂອງລາວ;
ເພາະວ່າຫລັງຈາກລາວໄດ້ອອກຈາກແຜ່ນ
ດິນມິດໂດໄນໄປແລ້ວ ລາວໄດ້ຖືກພຣະ
ວິນຍານ [ກ]ຊົງນຳໄປຫາແຜ່ນດິນນີໄຟ, ຈົນ
ໄປເຖິງລາຊາວັງຂອງກະສັດ ຊຶ່ງເປັນຜູ້
ປົກຄອງທົ່ວແຜ່ນດິນ [ຂ]ຍົກເວັ້ນແຕ່ແຜ່ນ
ດິນອິດຊະມາເອນເທົ່ານັ້ນ; ແລະ ເພິ່ນຄື
ບິດາຂອງລາໂມໄນ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ເຂົ້າໄປໃນວັງຂອງກະສັດ ແລະ ກົ້ມຫົວ
ລົງຕໍ່ໜ້າຂອງກະສັດ, ແລະ ກ່າວກັບເພິ່ນ
ວ່າ: ຈົ່ງເບິ່ງ, ໂອ້ ກະສັດເອີຍ ພວກຂ້ານ້ອຍ
ເປັນອ້າຍນ້ອງຂອງອຳໂມນ, ຜູ້ທີ່ທ່ານໄດ້
[ກ]ປົດປ່ອຍອອກຈາກຄຸກນັ້ນ.
3 ບັດນີ້, ກະສັດເອີຍ ເມື່ອທ່ານໄວ້ຊີວິດ
ຂອງພວກຂ້ານ້ອຍ, ແລ້ວພວກຂ້ານ້ອຍຈະ
ຍອມເປັນຂ້າໃຊ້ຂອງທ່ານ. ແລະ ກະສັດ
ກ່າວກັບພວກເຂົາວ່າ: ຈົ່ງລຸກຂຶ້ນເຖີດ,
ເພາະວ່າຂ້າພະເຈົ້າໄວ້ຊີວິດຂອງພວກເຈົ້າ
ແລ້ວ, ແລະ ຂ້າພະເຈົ້າຈະບໍ່ຍອມໃຫ້ພວກ
ເຈົ້າເປັນຂ້າໃຊ້ຂອງຂ້າພະເຈົ້າ; ແຕ່ຂ້າພະ
ເຈົ້າຈະຂໍຮ້ອງໃຫ້ພວກເຈົ້າປະຕິບັດສາດ
ສະໜາກິດແກ່ຂ້າພະເຈົ້າ ເພາະຂ້າພະ
ເຈົ້າມີຄວາມຫຍຸ້ງຍາກໃນຈິດໃຈບາງຢ່າງ
ຍ້ອນວ່າຄວາມເອື້ອເຟື້ອເພື່ອແຜ່ ແລະ
ຄວາມຍິ່ງໃຫຍ່ຂອງຄຳເວົ້າຂອງອຳໂມນ
ອ້າຍຂອງພວກເຈົ້າ; ແລະ ຂ້າພະເຈົ້າປາດ
ຖະໜາຢາກຮູ້ສາເຫດວ່າເປັນດ້ວຍເຫດ
ໃດ ລາວຈຶ່ງບໍ່ໄດ້ຂຶ້ນມາຈາກມິດໂດໄນ
ພ້ອມກັບພວກເຈົ້າ.
4 ແລະ ອາໂຣນກ່າວກັບກະສັດວ່າ: ຈົ່ງ
ເບິ່ງ, ພຣະວິນຍານຂອງພຣະຜູ້ເປັນເຈົ້າ
ໄດ້ເອີ້ນລາວໃຫ້ໄປທາງອື່ນ; ລາວໄດ້ໄປ
ຫາແຜ່ນດິນອິດຊະມາເອນ, ເພື່ອສິດສອນ
ຜູ້ຄົນຂອງທ່ານລາໂມໄນ.
5 ບັດນີ້ ກະສັດກ່າວກັບພວກເຂົາວ່າ:
ແມ່ນອັນໃດທີ່ພວກເຈົ້າເວົ້າກ່ຽວກັບພຣະ
ວິນຍານຂອງພຣະຜູ້ເປັນເຈົ້າ? ຈົ່ງເບິ່ງ, ນີ້
ຄືເລື່ອງທີ່ເຮັດໃຫ້ຂ້າພະເຈົ້າມີຄວາມຫຍຸ້ງ
ຍາກໃນຈິດໃຈ.
6 ແລະ ມັນໝາຍຄວາມວ່າແນວໃດເມື່ອ
ອຳໂມນເວົ້າວ່າ—[ກ]ຖ້າຫາກທ່ານກັບໃຈ
ແລ້ວ ທ່ານຈະລອດ, ແລະ ຖ້າຫາກທ່ານ
ບໍ່ກັບໃຈແລ້ວ, ທ່ານຈະຖືກປະຖິ້ມໃນວັນ

**22** 1 *ກ* ແອວ 21:16–17.
*ຂ* ແອວ 21:21–22.
2 *ກ* ແອວ 20:26.
6 *ກ* ແອວ 20:17–18.

ສຸດທ້າຍ?
7 ແລະ ອາໂຣນໄດ້ຕອບ ແລະ ກ່າວກັບ
ເພິ່ນວ່າ: ທ່ານເຊື່ອບໍວ່າມີພຣະເຈົ້າ? ແລະ
ກະສັດ ຕອບວ່າ: ຂ້າພະເຈົ້າ ຮູ້ວ່າ ຊາວ
ອາມາລະໄຄເວົ້າວ່າ ມີພຣະເຈົ້າ, ແລະ ຂ້າ
ພະເຈົ້າກໍໄດ້ອະນຸຍາດໃຫ້ພວກເຂົາສ້າງ
ບ່ອນລີ້ໄພ ເພື່ອພວກເຂົາຈະໄດ້ມາຊຸມນຸມ
ກັນ ເພື່ອນະມັດສະການພຣະອົງ. ແລະ
ບັດນີ້ຖ້າຫາກເຈົ້າເວົ້າວ່າ ມີພຣະເຈົ້າແລ້ວ,
ຈົ່ງເບິ່ງ ຂ້າພະເຈົ້າກໍຈະ [ກ]ເຊື່ອ.
8 ແລະ ບັດນີ້ເມື່ອອາໂຣນໄດ້ຍິນເລື່ອງນີ້
ແລ້ວ, ໃຈຂອງລາວກໍເລີ່ມປິຕິຍິນດີ, ແລະ
ກ່າວວ່າ: ຈົ່ງເບິ່ງ, ແນ່ນອນທີ່ສຸດຄືກັນ
ກັບທ່ານມີຊີວິດຢູ່ສັນໃດ, ໂອ້ ກະສັດເອີຍ
ພຣະເຈົ້າກໍມີຢູ່ສັນນັ້ນ.
9 ແລະ ກະສັດ ຖາມວ່າ: ພຣະເຈົ້າຄື
[ກ]ພຣະວິນຍານທີ່ຍິ່ງໃຫຍ່ ຊຶ່ງໄດ້ນຳພາບັນ
ພະບຸລຸດຂອງພວກເຮົາອອກມາຈາກແຜ່ນ
ດິນເຢຣູຊາເລັມນັ້ນບໍ?
10 ແລະ ອາໂຣນກ່າວກັບເພິ່ນວ່າ: ແມ່ນ
ແລ້ວ, ພຣະອົງຄືພຣະວິນຍານທີ່ຍິ່ງໃຫຍ່
ອົງນັ້ນ, ແລະ ພຣະອົງ [ກ]ໄດ້ສ້າງທຸກສິ່ງທຸກ
ຢ່າງໃນສະຫວັນ ແລະ ໃນແຜ່ນດິນໂລກ.
ທ່ານເຊື່ອເລື່ອງນີ້ບໍ?
11 ແລະ ເພິ່ນກ່າວວ່າ: ເຊື່ອແລ້ວ, ຂ້າ
ພະເຈົ້າເຊື່ອວ່າ ພຣະວິນຍານທີ່ຍິ່ງໃຫຍ່
ອົງນັ້ນໄດ້ສ້າງທຸກສິ່ງທຸກຢ່າງ ແລະ ຂ້າພະ
ເຈົ້າປາດຖະໜາຢາກໃຫ້ເຈົ້າບອກຂ້າພະ
ເຈົ້າອີກກ່ຽວກັບເລື່ອງທັງໝົດນີ້ ເພື່ອຂ້າ
ພະເຈົ້າຈະ [ກ]ເຊື່ອໃນຄຳເວົ້າຂອງເຈົ້າ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາອາໂຣນເຫັນວ່າກະສັດເຊື່ອໃນຄຳ
ເວົ້າຂອງລາວແລ້ວ, ລາວຈຶ່ງເລີ່ມຕົ້ນຕັ້ງ
ແຕ່ການສ້າງຂອງອາດາມ, ໂດຍ [ກ]ອ່ານ
ພຣະຄຳພີໃຫ້ກະສັດຟັງວ່າ ພຣະເຈົ້າ
ໄດ້ສ້າງມະນຸດຕາມຮູບຮ່າງລັກສະນະ
ຂອງພຣະອົງເອງ, ແລະວ່າພຣະເຈົ້າໄດ້
ປະທານພຣະບັນຍັດຂອງພຣະອົງໃຫ້ແກ່
ລາວ, ແລະ ຍ້ອນການລ່ວງລະເມີດນັ້ນ
ມະນຸດຈຶ່ງຕົກ.
13 ແລະ ອາໂຣນໄດ້ຊີ້ແຈງພຣະຄຳພີ
ໃຫ້ຟັງຕັ້ງແຕ່ [ກ]ການສ້າງອາດາມໂດຍບັນ
ລະຍາຍເຖິງການຕົກຂອງມະນຸດໃຫ້ເພິ່ນ
ຟັງ, ແລະ ສະພາບແຫ່ງການມະລົນ ແລະ
[ຂ]ແຜນແຫ່ງການໄຖ່ນຳອີກ, ຊຶ່ງຖືກຕຽມໄວ້
ໂດຍທາງພຣະຄຣິດນັບ [ຄ]ຕັ້ງແຕ່ການວາງ
ຮາກຖານຂອງໂລກສຳລັບຜູ້ໃດກໍຕາມທີ່
ເຊື່ອໃນພຣະນາມຂອງພຣະອົງ.
14 ແລະ ເນື່ອງຈາກວ່າມະນຸດ [ກ]ຕົກ ເຂົາ
ຈຶ່ງບໍ່ມີ [ຂ]ຄຸນຄວາມດີຫຍັງມາດ້ວຍຕົວເອງ;
ແຕ່ຄວາມທຸກທໍລະມານ ແລະ ການສິ້ນ
ພຣະຊົນຂອງພຣະຄຣິດໄດ້ [ຄ]ຊົດໃຊ້ແທນ
ບາບຂອງມະນຸດ ໂດຍການມີສັດທາ ແລະ
ການກັບໃຈ ແລະ ອື່ນໆ ແລະວ່າພຣະອົງ
ເຮັດໃຫ້ສາຍຮັດແຫ່ງຄວາມຕາຍຂາດ
ອອກ, ເພື່ອວ່າ [ງ]ຫລຸມຝັງສົບຈະບໍ່ມີໄຊ
ຊະນະ, ແລະ ຄວາມເຈັບປວດແຫ່ງຄວາມ
ຕາຍຈະຖືກກືນເຂົ້າໄປໃນຄວາມຫວັງແຫ່ງ
ລັດສະໝີພາບ; ແລະ ອາໂຣນໄດ້ຊີ້ແຈງ
ເລື່ອງທັງໝົດນີ້ຕໍ່ກະສັດ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກອາໂຣນໄດ້ຊີ້ແຈງເລື່ອງເຫລົ່າ

7 *ກ* ຄພ 46:13–14.
9 *ກ* ແອວ 18:18–28.
10 *ກ* ຄມພ ສ້າງ, ການສ້າງ.
11 *ກ* ຄມພ ເຊື່ອ, ຄວາມເຊື່ອ.
12 *ກ* 1 ນຟ 5:10–18; ແອວ 37:9.
13 *ກ* ປຖກ 1:26–28.
*ຂ* ຄມພ ແຜນແຫ່ງການໄຖ່.
*ຄ* 2 ນຟ 9:18.
14 *ກ* ຄມພ ການຕົກຂອງ ອາດາມ ແລະ ເອວາ.
*ຂ* 2 ນຟ 25:23; ແອວ 42:10–25.
*ຄ* ແອວ 34:8–16. ຄມພ ຊົດໃຊ້, ການຊົດໃຊ້.
*ງ* ອຊຢ 25:8; 1 ກຣທ 15:55.

ນີ້ຕໍ່ເພິ່ນແລ້ວ, ກະສັດໄດ້ເວົ້າວ່າ: ຂ້າພະເຈົ້າຈະເຮັດ [ກ]ແນວໃດເພື່ອຂ້າພະເຈົ້າຈະມີຊີວິດນິລັນດອນ ຊຶ່ງເຈົ້າໄດ້ເວົ້າມານັ້ນ? ແທ້ຈິງແລ້ວ, ຂ້າພະເຈົ້າຈະເຮັດແນວໃດເພື່ອຈະໄດ້ [ຂ]ເກີດຈາກພຣະເຈົ້າ, ໂດຍຂຸດເອົາຮາກຂອງວິນຍານຊົ່ວນີ້ອອກຈາກໜ້າເອິກຂອງຂ້າພະເຈົ້າ, ແລະ ຮັບເອົາພຣະວິນຍານຂອງພຣະອົງ, ເພື່ອຂ້າພະເຈົ້າຈະເຕັມໄປດ້ວຍຄວາມປິຕິຍິນດີ, ເພື່ອວ່າຂ້າພະເຈົ້າຈະບໍ່ໄດ້ຖືກປະຖິ້ມໃນວັນສຸດທ້າຍ? ຈົ່ງເບິ່ງ, ກະສັດໄດ້ເວົ້າວ່າ ຂ້າພະເຈົ້າຈະສະລະ [ຄ]ທຸກສິ່ງທຸກຢ່າງທີ່ຂ້າພະເຈົ້າເປັນເຈົ້າຂອງ, ແທ້ຈິງແລ້ວ, ຂ້າພະເຈົ້າຈະປະຖິ້ມລາຊາອານາຈັກຂອງຂ້າພະເຈົ້າ, ເພື່ອຈະໄດ້ຮັບຄວາມຜາສຸກອັນຍິ່ງໃຫຍ່ນີ້.

16 ແຕ່ອາໂຣນໄດ້ເວົ້າກັບເພິ່ນວ່າ: ຖ້າຫາກວ່າທ່ານ [ກ]ປາດຖະໜາສິ່ງເຫລົ່ານີ້ ກໍຂໍໃຫ້ທ່ານກົ້ມຂາບລົງຕໍ່ພຣະພັກຂອງພຣະເຈົ້າ, ແທ້ຈິງແລ້ວ, ຂໍໃຫ້ທ່ານກັບໃຈຈາກບາບທັງໝົດຂອງທ່ານ, ແລະ ໃຫ້ກົ້ມຂາບລົງຕໍ່ພຣະພັກຂອງພຣະເຈົ້າ, ແລະ ເອີ້ນຫາພຣະນາມຂອງພຣະອົງໃນສັດທາ, ໂດຍເຊື່ອວ່າທ່ານຈະໄດ້ຮັບຄຳຕອບ, ແລ້ວທ່ານຈະໄດ້ຮັບ [ຂ]ຄວາມຫວັງຕາມຄວາມປາດຖະໜາ.

17 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອອາໂຣນໄດ້ເວົ້າຂໍ້ຄວາມເຫລົ່ານີ້ແລ້ວ, ກະສັດກໍໄດ້ [ກ]ຄຸເຂົ່າກົ້ມຂາບລົງ ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ເພິ່ນໄດ້ຂາບຕົວລົງຈົນເຖິງພື້ນດິນ, ແລະ [ຂ]ສົ່ງສຽງຈົນສຸດກຳລັງ, ກ່າວວ່າ:

18 ໂອ້ ພຣະອົງເຈົ້າ, ອາໂຣນໄດ້ບອກຂ້ານ້ອຍວ່າມີພຣະເຈົ້າ; ແລະ ຖ້າຫາກວ່າມີພຣະເຈົ້າແທ້ໆ ແລະ ຖ້າຫາກວ່າພຣະອົງເປັນເຈົ້າ, ແລ້ວຂໍຈົ່ງໂປດສະແດງໃຫ້ຂ້ານ້ອຍຮູ້ຈັກດ້ວຍເຖີດ, ແລະ ຂ້ານ້ອຍຈະປະຖິ້ມບາບຂອງຂ້ານ້ອຍທັງໝົດເພື່ອຈະໄດ້ຮູ້ຈັກພຣະອົງ, ແລະ ເພື່ອຂ້ານ້ອຍຈະຖືກຍົກຂຶ້ນຈາກຄວາມຕາຍ, ແລະ ເພື່ອຈະລອດໃນວັນສຸດທ້າຍ. ແລະ ບັດນີ້ເມື່ອກະສັດໄດ້ກ່າວຂໍ້ຄວາມນີ້ແລ້ວ, ເພິ່ນກໍໝົດສະຕິໄປຄືກັບຕາຍ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກຂ້າໃຊ້ຂອງເພິ່ນໄດ້ແລ່ນໄປບອກລາຊິນີໃຫ້ຮູ້ເຖິງເລື່ອງທັງໝົດທີ່ໄດ້ເກີດກັບກະສັດ. ແລະ ນາງກໍໄດ້ມາຫາກະສັດ; ແລະ ເມື່ອເຫັນວ່າເພິ່ນນອນຢູ່ຄືກັບຕາຍແລ້ວ, ແລະ ອາໂຣນກັບອ້າຍນ້ອງຂອງລາວກໍຢືນຢູ່ທີ່ນັ້ນຄືກັບວ່າພວກເຂົາເປັນສາເຫດຂອງການລົ້ມລົງຂອງເພິ່ນ, ນາງຈຶ່ງຄຽດແຄ້ນໃຫ້ພວກເຂົາ, ແລະ ໄດ້ສັ່ງພວກຂ້າໃຊ້ຂອງຕົນ, ຫລື ພວກຂ້າໃຊ້ຂອງກະສັດໃຫ້ເອົາອາໂຣນ ແລະອ້າຍນ້ອງຂອງລາວໄປຂ້າຖິ້ມເສຍ.

20 ບັດນີ້ພວກຂ້າໃຊ້ໄດ້ເຫັນສາເຫດຂອງການລົ້ມລົງຂອງກະສັດ, ສະນັ້ນ ພວກເຂົາຈຶ່ງບໍ່ກ້າທີ່ຈະຈັບອາໂຣນ ແລະ ອ້າຍນ້ອງຂອງລາວ; ແລະ ພວກເຂົາໄດ້ວິງວອນລາຊິນີວ່າ: ດ້ວຍເຫດໃດ ທ່ານຈຶ່ງສັ່ງໃຫ້ພວກຂ້ານ້ອຍຂ້າຄົນເຫລົ່ານີ້ ໃນເມື່ອຄົນຜູ້ໜຶ່ງຂອງພວກເຂົາ [ກ]ແຂງແຮງກວ່າພວກເຮົາທັງໝົດ? ສະນັ້ນ ພວກເຮົາກໍຈະລົ້ມລົງຢູ່ຕໍ່ໜ້າພວກເຂົາ.

15 *ກ* ກຈກ 2:37.
*ຂ* ແອວ 5:14, 49.
*ຄ* ມທ 13:44–46; 19:16–22.
16 *ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
*ຂ* ອທ 12:4.
17 *ກ* ຄພ 5:24.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
20 *ກ* ແອວ 18:1–3.

21 ບັດນີ້ເມື່ອລາຊີນີເຫັນຄວາມຢ້ານກົວ
ຂອງພວກຂ້າໃຊ້ ນາງກໍເລີ່ມມີຄວາມຢ້ານ
ກົວຫລາຍຂຶ້ນ, ຢ້ານວ່າສິ່ງບໍ່ດີຈະເກີດກັບ
ນາງ. ແລະ ນາງຈຶ່ງໄດ້ສັ່ງໃຫ້ພວກຂ້າໃຊ້
ຂອງຕົນໄປເອີ້ນໃຫ້ຜູ້ຄົນມາ, ເພື່ອພວກ
ເຂົາຈະໄດ້ຂ້າອາໂຣນພ້ອມກັບອ້າຍນ້ອງ
ຂອງລາວເສຍ.
22 ບັດນີ້ເມື່ອອາໂຣນເຫັນຄວາມຕັ້ງໃຈ
ຂອງລາຊີນີ, ໂດຍຮູ້ຈັກຄວາມແຂງກະດ້າງ
ຂອງໃຈຂອງຜູ້ຄົນນຳອີກ, ຈຶ່ງຢ້ານວ່າຝູງ
ຊົນຈະມາຊຸມນຸມກັນ ແລະ ຈະມີການຂັດ
ແຍ້ງກັນຢ່າງໃຫຍ່ຫລວງ, ແລະ ຈະມີເລື່ອງ
ຫຍຸ້ງຍາກໃນບັນດາພວກເຂົາ; ສະນັ້ນ
ລາວຈຶ່ງເດ່ມືອອກໄປຍົກເອົາກະສັດຂຶ້ນ
ຈາກພື້ນດິນ, ແລະ ກ່າວກັບເພິ່ນວ່າ: ຈົ່ງ
ຢືນຂຶ້ນເຖີດ, ແລະ ເພິ່ນກໍໄດ້ລຸກຢືນຂຶ້ນ
ດ້ວຍຕົວເອງ.
23 ບັດນີ້ເລື່ອງນີ້ໄດ້ເກີດຂຶ້ນໃນຂະນະ
ທີ່ລາຊີນີ ແລະ ພວກຂ້າໃຊ້ຫລາຍຄົນຢູ່
ນຳ. ແລະ ເມື່ອພວກເຂົາໄດ້ເຫັນເຫດການ
ນີ້, ພວກເຂົາກໍແປກປະຫລາດໃຈຫລາຍ
ແລະ ເລີ່ມມີຄວາມຢ້ານກົວຫລາຍຂຶ້ນ.
ແລະ ກະສັດໄດ້ກ້າວອອກໄປ ແລະ ເລີ່ມ
ປະຕິບັດສາດສະໜາກິດແກ່ຄົນເຫລົ່ານັ້ນ.
ແລະ ເພິ່ນໄດ້ [ກ]ປະຕິບັດສາດສະໜາກິດ
ແກ່ພວກເຂົາ, ເຖິງຂະໜາດທີ່ຄົນໃນຄອບ
ຄົວຂອງເພິ່ນທັງໝົດໄດ້ [ຂ]ປ່ຽນໃຈເຫລື້ອມ
ໃສໃນພຣະຜູ້ເປັນເຈົ້າ.
24 ບັດນີ້ຜູ້ຄົນໄດ້ມາເຕົ້າໂຮມກັນຢ່າງ
ຫລວງຫລາຍເພາະເປັນຄຳສັ່ງຂອງລາຊີນີ
ແລະ ເລີ່ມມີການຈົ່ມວ່າເກີດຂຶ້ນໃນບັນດາ
ພວກເຂົາເພາະອາໂຣນ ແລະ ອ້າຍນ້ອງ
ຂອງລາວ.
25 ແຕ່ວ່າກະສັດໄດ້ກ້າວອອກໄປໃນບັນ
ດາພວກເຂົາ ແລະ ປະຕິບັດສາດສະໜາ
ກິດແກ່ພວກເຂົາ. ແລະ ພວກເຂົາຈຶ່ງໄດ້
ສະຫງົບລົງຕໍ່ໜ້າອາໂຣນ ແລະ ຜູ້ທີ່ຢູ່ກັບ
ລາວ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເມື່ອກະສັດເຫັນວ່າຜູ້ຄົນສະຫງົບລົງແລ້ວ,
ເພິ່ນຈຶ່ງສັ່ງໃຫ້ອາໂຣນ ແລະ ອ້າຍນ້ອງ
ຂອງລາວກ້າວອອກໄປຢູ່ທ່າມກາງຝູງ
ຊົນ ແລະ ໃຫ້ອາໂຣນສັ່ງສອນພຣະຄຳແກ່
ພວກເຂົາ.
27 ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ກະສັດໄດ້ສົ່ງສານ [ກ]ປະກາດໄປທົ່ວ
ແຜ່ນດິນ, ໄປຫາບັນດາຜູ້ຄົນທັງໝົດຂອງ
ເພິ່ນ, ຊຶ່ງຢູ່ທົ່ວແຜ່ນດິນຂອງເພິ່ນ ຊຶ່ງຢູ່
ຕາມທຸກພາກພື້ນໂດຍອ້ອມຮອບ, ຊຶ່ງຢູ່
ໃນຊາຍແດນ ຈົນເຖິງທະເລທາງຕາເວັນ
ອອກ, ແລະ ທາງຕາເວັນຕົກ, ແລະ ຊຶ່ງຖືກ
ແບ່ງແຍກອອກຈາກ [ຂ]ເຊຣາເຮັມລາໂດຍ
ເສັ້ນແຄບໆຂອງຖິ່ນແຫ້ງແລ້ງກັນດານ,
ຊຶ່ງເລີ່ມຈາກທະເລທາງຕາເວັນອອກ ຈົນ
ເຖິງທະເລທາງຕາເວັນຕົກ, ແລະ ອ້ອມ
ຮອບຊາຍຝັ່ງທະເລ, ແລະ ຊາຍແດນຂອງ
ຖິ່ນແຫ້ງແລ້ງກັນດານ ຊຶ່ງຢູ່ທາງເໜືອໃກ້
ແຜ່ນດິນເຊຣາເຮັມລາ, ຜ່ານຊາຍແດນ
ແມນທາຍ, ໃກ້ໆກັບຫົວແມ່ນ້ຳຊີໂດນ, ຊຶ່ງ
ໄຫລຈາກທາງຕາເວັນອອກໄປຫາທາງຕາ
ເວັນຕົກ—ແລະ ນີ້ຄືການແບ່ງແຍກຂອງ
ຊາວເລມັນກັບຊາວນີໄຟ.
28 ບັດນີ້, ຊາວເລມັນຜູ້ທີ່ [ກ]ຂີ້ຄ້ານມັກ
ງ່າຍອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານ,
ແລະ ຢູ່ໃນຜ້າເຕັ້ນ; ແລະ ແຜ່ຂະຫຍາຍ
ອອກໄປທົ່ວຖິ່ນແຫ້ງແລ້ງກັນດານທາງຕາ

23 ກ ຄມພ ສັ່ງສອນ; ສອນ, ຜູ້ສອນ, ຄູສອນ; ປະຕິບັດ.
ຂ ຄມພ ປ່ຽນໃຈ, ການ ປ່ຽນໃຈເຫລື້ອມໃສ.
27 ກ ແອວ 23:1–4.
ຂ ອມນ 1:13–17.
28 ກ 2 ນຟ 5:22–25.

ເວັນຕົກ, ໃນແຜ່ນດິນນີໄຟ; ແທ້ຈິງແລ້ວ, ແລະ ທາງຕາເວັນຕົກຂອງແຜ່ນດິນເຊຣາເຮັມລານຳອີກ, ໃນຊາຍແດນໃກ້ຝັ່ງທະເລ, ແລະ ທາງຕາເວັນຕົກໃນແຜ່ນດິນນີໄຟ, ຊຶ່ງເປັນມູນມໍລະດົກຂອງບັນພະບຸລຸດຂອງພວກເຂົາ, ແລະ ຢູ່ໃນຊາຍແດນໃກ້ຝັ່ງທະເລດັ່ງນັ້ນ.

29 ແລະ ມີຊາວເລມັນເປັນຈຳນວນຫລວງຫລາຍອາໄສຢູ່ທາງຕາເວັນອອກໃກ້ຝັ່ງທະເລດັ່ງນັ້ນ, ຊຶ່ງບ່ອນນັ້ນຊາວນີໄຟໄດ້ຂັບໄລ່ພວກເຂົາໜີໄປ. ແລະ ຊາວນີໄຟເກືອບຈະຕົກໄປຢູ່ໃນວົງລ້ອມຂອງຊາວເລມັນ; ເຖິງຢ່າງໃດກໍຕາມ ຊາວນີໄຟຍັງເຂົ້າເປັນເຈົ້າຂອງແຜ່ນດິນທາງເໜືອທັງໝົດທີ່ຢູ່ໃກ້ຊາຍແດນຂອງຖິ່ນແຫ້ງແລ້ງກັນດານທີ່ຫົວແມ່ນ້ຳຊີໂດນ, ຈາກທາງຕາເວັນອອກໄປຫາທາງຕາເວັນຕົກ, ໂດຍອ້ອມຮອບທາງດ້ານຖິ່ນແຫ້ງແລ້ງກັນດານທາງເໜືອ, ຈົນກະທັ້ງພວກເຂົາມາເຖິງແຜ່ນດິນ ຊຶ່ງພວກເຂົາເອີ້ນວ່າແຜ່ນດິນ [ກ]ອຸດົມສົມບູນ.

30 ແລະ ມັນມີຊາຍແດນຕິດກັບແຜ່ນດິນ ຊຶ່ງພວກເຂົາເອີ້ນວ່າ [ກ]ແຜ່ນດິນຮ້າງ, ຊຶ່ງມັນຢູ່ໄກໄປທາງເໜືອຈົນໄປເຖິງແຜ່ນດິນຊຶ່ງເຄີຍມີຜູ້ຄົນອາໄສຢູ່ ແລະ ໄດ້ຖືກທຳລາຍໄປແລ້ວ, ຊຶ່ງພວກເຮົາໄດ້ເວົ້າເຖິງ [ຂ]ກະດູກຂອງຄົນພວກນັ້ນມາແລ້ວ, ຊຶ່ງເປັນບ່ອນທີ່ຜູ້ຄົນຂອງເຊຣາເຮັມລາຄົ້ນພົບ ແລະ ເປັນບ່ອນ [ຄ]ທຳອິດທີ່ພວກເຂົາມາຮອດ.

31 ແລະ ພວກເຂົາໄດ້ຈາກບ່ອນນັ້ນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານທາງໃຕ້. ດັ່ງນັ້ນ ແຜ່ນດິນທາງເໜືອຈຶ່ງຖືກເອີ້ນວ່າ [ກ]ແຜ່ນດິນຮ້າງ, ແລະ ເອີ້ນແຜ່ນດິນທາງໃຕ້ວ່າອຸດົມສົມບູນ, ເພາະເປັນຖິ່ນແຫ້ງແລ້ງກັນດານທີ່ເຕັມໄປດ້ວຍສັດປ່າທຸກຊະນິດ, ຊຶ່ງສັດສ່ວນໜຶ່ງໄດ້ມາຈາກແຜ່ນດິນທາງເໜືອ ເພື່ອມາຊອກຫາອາຫານການກິນ.

32 ແລະ ບັດນີ້, ມັນຈະ [ກ]ໃຊ້ເວລາພຽງແຕ່ມື້ເຄິ່ງເທົ່ານັ້ນສຳລັບຊາວນີໄຟທີ່ຈະເດີນທາງໃນຊາຍແດນລະຫວ່າງແຜ່ນດິນອຸດົມສົມບູນກັບແຜ່ນດິນຮ້າງ, ຈາກທະເລທາງຕາເວັນອອກໄປຫາທາງຕາເວັນຕົກ; ແລະ ແຜ່ນດິນນີໄຟກັບແຜ່ນດິນເຊຣາເຮັມລາເກືອບຈະຖືກປິດລ້ອມດ້ວຍນ້ຳ, ເພາະມີແຜ່ນດິນ [ຂ]ແຄບເຂົ້າຄືກັນກັບຄືຢູ່ລະຫວ່າງແຜ່ນດິນທາງເໜືອກັບແຜ່ນດິນທາງໃຕ້.

33 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟໄດ້ເປັນເຈົ້າຂອງແຜ່ນດິນອຸດົມສົມບູນຈາກທະເລທາງຕາເວັນອອກຈົນເຖິງທະເລທາງຕາເວັນຕົກ, ແລະ ດັ່ງນັ້ນ ເພາະຄວາມສະຫລາດຂອງຊາວນີໄຟ, ພວກເຂົາພ້ອມດ້ວຍທະຫານຍາມ ແລະ ກອງທັບຂອງພວກເຂົາຈຶ່ງໄດ້ປິດລ້ອມຊາວເລມັນໄວ້ຢູ່ທາງໃຕ້ ເພື່ອບໍ່ໃຫ້ພວກເຂົາມາເປັນເຈົ້າຂອງແຜ່ນດິນທາງເໜືອ, ແລະ ເພື່ອຊາວເລມັນຈະບໍ່ໄດ້ມາຢຽບຍ່ຳແຜ່ນດິນທາງເໜືອອີກຕໍ່ໄປ.

34 ສະນັ້ນ ຊາວເລມັນຈຶ່ງບໍ່ໄດ້ເປັນເຈົ້າຂອງອີກຕໍ່ໄປ ນອກຈາກແຜ່ນດິນນີໄຟ ແລະ ຖິ່ນແຫ້ງແລ້ງກັນດານ ໂດຍອ້ອມຮອບເທົ່ານັ້ນ. ບັດນີ້ມັນເປັນຄວາມສະຫລຽວສະຫລາດຂອງຊາວນີໄຟ—ໃນຖານະທີ່ຊາວເລມັນເປັນສັດຕູຕໍ່ພວກເຂົາ, ພວກເຂົາຈຶ່ງບໍ່ຍອມທີ່ຈະທຸກໃນທຸກກໍລະ

29 *ກ* ແອວ 52:9; 63:5.
30 *ກ* ແອວ 50:34; ມມ 4:1–3.
*ຂ* ມຊຢ 8:7–12; 28:11–19.
*ຄ* ຮລມ 6:10.
31 *ກ* ຮລມ 3:5–6.
32 *ກ* ຮລມ 4:7.
*ຂ* ແອວ 50:34.

ນີ, ແລະ ເພື່ອພວກເຂົາຈະໄດ້ມີບ່ອນຢູ່ອາ
ໄສ ບ່ອນທີ່ພວກເຂົາຈະສາມາດໜີໄປໄດ້,
ຕາມຄວາມປະສົງຂອງພວກເຂົາ.
35 ແລະ ບັດນີ້, ຫລັງຈາກຂ້າພະເຈົ້າໄດ້
ກ່າວ ເລື່ອງ ເຫລົ່ານີ້ແລ້ວ, ຈະຫັນໄປເວົ້າ
ເຖິງ ເລື່ອງ ລາວຂອງ ອຳໂມນ, ອາໂຣນ,
ອອມເນີ ແລະ ຮິມໄນ, ແລະ ອ້າຍນ້ອງຂອງ
ພວກເຂົາອີກ.

## ບົດທີ 23

*ອິດສະລະພາບທາງສາດສະໜາໄດ້ຖືກປະກາດ—ຊາວເລມັນໃນເຈັດແຜ່ນດິນ ແລະ ຫົວເມືອງຕ່າງໆ ປ່ຽນໃຈເຫລື້ອມໃສ—ພວກເຂົາເອີ້ນຕົວເອງວ່າຊາວ ອານໄທ-ນີໄຟ-ລີໄຮ ແລະ ຫລຸດພົ້ນຈາກການສາບແຊ່ງ—ຊາວອາມາລະໄຄ ແລະ ຊາວອະມິວລອນປະຕິເສດຄວາມຈິງ. ປະມານ 90–77 ປີ ກ່ອນ ຄ.ສ.*

1 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ກະສັດຂອງຊາວເລມັນໄດ້ສົ່ງ [ກ]ຂ່າວໄປ
ຫາບັນດາຜູ້ຄົນທັງໝົດຂອງເພິ່ນວ່າ ບໍ່ໃຫ້
ຈັບອຳໂມນ, ຫລື ອາໂຣນ, ຫລື ອອມເນີ,
ຫລື ຮິມໄນ, ຫລື ອ້າຍນ້ອງຂອງພວກເຂົາ
ຜູ້ທີ່ຈະອອກໄປສັ່ງສອນພຣະຄຳຂອງພຣະ
ເຈົ້າ, ບໍ່ວ່າຈະຢູ່ບ່ອນໃດກໍຕາມ, ຫລື ບໍ່ວ່າ
ຈະຢູ່ໃນແຜ່ນດິນສ່ວນໃດຂອງພວກເຂົາ.
2 ແທ້ຈິງແລ້ວ, ເພິ່ນໄດ້ອອກຄຳສັ່ງໄປ
ຍັງບັນດາຜູ້ຄົນວ່າ ບໍ່ໃຫ້ຈັບກຸມເຂົາເຈົ້າ, ບໍ່
ໃຫ້ມັດເຂົາເຈົ້າ ຫລື ເອົາເຂົາເຈົ້າເຂົ້າຄຸກ;
ທັງບໍ່ໃຫ້ຖົ່ມນ້ຳລາຍໃສ່ເຂົາເຈົ້າ, ບໍ່ໃຫ້ທຸບ
ຕີເຂົາເຈົ້າ, ບໍ່ໃຫ້ຂັບໄລ່ເຂົາເຈົ້າອອກຈາກ
ທຳມະສາລາຂອງພວກເຂົາ, ບໍ່ໃຫ້ຂ້ຽນຕີ
ເຂົາເຈົ້າ; ທັງບໍ່ໃຫ້ແກວ່ງກ້ອນຫີນໃສ່ເຂົາ
ເຈົ້າ, ແຕ່ເຂົາເຈົ້າມີສິດທີ່ຈະເຂົ້າໄປໃນ
ບ້ານເຮືອນຂອງພວກເຂົາ, ແລະ ໃນພຣະ
ວິຫານຂອງພວກເຂົາ, ແລະ ໃນບ່ອນລີ້ໄພ
ຂອງພວກເຂົານຳອີກ.
3 ແລະ ພວກເຂົາຈະໄດ້ອອກໄປສັ່ງ
ສອນພຣະຄຳຕາມຄວາມປາດຖະໜາຂອງ
ຕົນສະນັ້ນ, ເພາະວ່າກະສັດໄດ້ປ່ຽນໃຈ
ເຫລື້ອມໃສໃນພຣະຜູ້ເປັນເຈົ້າແລ້ວ, ພ້ອມ
ທັງທຸກຄົນໃນລາຊາວັງຂອງເພິ່ນ; ດັ່ງນັ້ນ
ເພິ່ນຈຶ່ງໄດ້ສົ່ງຂ່າວສານຂອງເພິ່ນໄປທົ່ວ
ແຜ່ນດິນເຖິງຜູ້ຄົນຂອງເພິ່ນ, ເພື່ອພຣະ
ຄຳຂອງພຣະເຈົ້າຈະບໍ່ໄດ້ມີອັນກີດຂວາງ,
ແຕ່ຈະໄດ້ອອກໄປຕະຫລອດທົ່ວແຜ່ນດິນ,
ເພື່ອປະຊາຊົນຂອງເພິ່ນຈະໄດ້ຍອມຮັບ
ເຖິງ [ກ]ຮີດຄອງປະເພນີອັນຊົ່ວຮ້າຍຂອງ
ບັນພະບຸລຸດຂອງພວກເຂົາ, ແລະ ເພື່ອ
ພວກເຂົາຈະໄດ້ຍອມຮັບວ່າພວກເຂົາເປັນ
ອ້າຍນ້ອງກັນທັງໝົດ, ແລະວ່າພວກເຂົາບໍ່
ຄວນເຮັດການຄາດຕະກຳ, ຫລື ປຸ້ນຈີ້, ຫລື
ລັກສິ່ງຂອງ, ຫລື ຫລິ້ນຊູ້, ຫລື ບໍ່ສ້າງຄວາມ
ຊົ່ວຮ້າຍຢ່າງໃດເລີຍ.
4 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອກະສັດໄດ້ສົ່ງຂ່າວສານອອກປະກາດ
ເຊັ່ນນີ້ແລ້ວ, ອາໂຣນ ແລະ ອ້າຍນ້ອງຂອງ
ລາວກໍໄດ້ອອກເດີນທາງຈາກເມືອງໜຶ່ງໄປ
ຫາອີກເມືອງໜຶ່ງ, ແລະ ຈາກບ່ອນນະມັດ
ສະການໜຶ່ງໄປຫາອີກບ່ອນໜຶ່ງ, ໂດຍໄດ້
ສະຖາປະນາສາດສະໜາຈັກຂຶ້ນ ແລະ
ແຕ່ງຕັ້ງປະໂລຫິດທົ່ວແຜ່ນດິນໃນບັນດາ
ຊາວເລມັນ, ເພື່ອສັ່ງສອນ ແລະ ສິດສອນ
ພຣະຄຳຂອງພຣະເຈົ້າໃນບັນດາພວກ
ເຂົາ; ແລະ ເຂົາເຈົ້າເລີ່ມມີຄວາມສຳເລັດ
ຢ່າງໃຫຍ່ຫລວງດັ່ງນີ້.
5 ແລະ ຄົນນັບເປັນພັນໆຖືກນຳມາສູ່

**23** 1 *ກ* ແອວ 22:27.
3 *ກ* ແອວ 26:24.

ຄວາມ ຮູ້ ເລື່ອງ ພຣະ ຜູ້ ເປັນ ເຈົ້າ, ແທ້ ຈິງ
ແລ້ວ, ຄົນນັບເປັນພັນໆຖືກນຳມາໃຫ້ເຊື່ອ
ຖືໃນ [ກ]ຮີດຄອງປະເພນີຂອງຊາວນີໄຟ;
ແລະ ພວກເຂົາໄດ້ຮັບການສິດສອນເຖິງ
[ຂ]ບັນທຶກ ແລະ ການທຳນາຍ ຊຶ່ງໄດ້ຮັບ
ມອບຕໍ່ໆກັນມາຈົນເຖິງປະຈຸບັນນີ້.
6 ແລະ ແນ່ນອນຕາບໃດທີ່ພຣະຜູ້ເປັນ
ເຈົ້າຊົງພຣະຊົນຢູ່ສັນໃດ, ຫລາຍຕໍ່ຫລາຍ
ຄົນກໍໄດ້ເຊື່ອຖືພຣະອົງສັນນັ້ນ, ຫລືວ່າ
ຫລາຍຕໍ່ຫລາຍຄົນຖືກນຳມາສູ່ຄວາມຮູ້
ຂອງຄວາມຈິງ, ໂດຍການສັ່ງສອນຂອງ
ອຳໂມນ ແລະ ພວກອ້າຍນ້ອງຂອງລາວ,
ຕາມວິນຍານແຫ່ງການເປີດເຜີຍ ແລະ
ການທຳນາຍ, ແລະ ອຳນາດຂອງພຣະ
ເຈົ້າເຮັດສິ່ງມະຫັດສະຈັນໃຫ້ແກ່ຄົນເຫລົ່າ
ນັ້ນ—ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບ
ພວກທ່ານວ່າ, ຕາບໃດທີ່ພຣະເຈົ້າຊົງພຣະ
ຊົນຢູ່ສັນໃດ, ຊາວເລມັນທີ່ເຊື່ອຖືໃນຄຳສັ່ງ
ສອນຂອງພວກເຂົາເຫລົ່ານັ້ນ ແລະ [ກ]ປ່ຽນ
ໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າຈະ [ຂ]ບໍ່
ເຄີຍຕົກໄປສັນນັ້ນ.
7 ເມື່ອພວກເຂົາກາຍມາເປັນຄົນຊອບ
ທຳແລ້ວ; ພວກເຂົາໄດ້ວາງອາວຸດແຫ່ງ
ການກະບົດຂອງພວກເຂົາ, ຄືພວກເຂົາບໍ່
ໄດ້ຕໍ່ສູ້ກັບພຣະເຈົ້າອີກຕໍ່ໄປ, ທັງບໍ່ໄດ້ຕໍ່ສູ້
ກັບອ້າຍນ້ອງຂອງພວກເຂົາອີກເລີຍ.
8 ບັດນີ້ຜູ້ຄົນເຫລົ່ານີ້ຄື [ກ]ພວກເຂົາຜູ້ທີ່
ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ.
9 ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນແຜ່ນ
ດິນອິດຊະມາເອນ;
10 ແລະ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນ
ແຜ່ນດິນມິດໂດໄນ;
11 ແລະ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນ
ເມືອງນີໄຟ;
12 ແລະ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນ
ແຜ່ນດິນໄຊລຳ, ແລະ ຜູ້ທີ່ຢູ່ໃນແຜ່ນດິນ
[ກ]ເຊັມລອນ, ແລະ ຢູ່ໃນເມືອງເລມູເອນ,
ແລະ ຢູ່ໃນເມືອງຊິມໄນລຳ.
13 ແລະ ນີ້ຄືຊື່ເມືອງຕ່າງໆຂອງຊາວ
ເລມັນ ຊຶ່ງໄດ້ [ກ]ປ່ຽນໃຈເຫລື້ອມໃສໃນພຣະ
ຜູ້ເປັນເຈົ້າ; ແລະ ຄົນພວກນີ້ຄືພວກທີ່ວາງ
ອາວຸດແຫ່ງການກະບົດຂອງພວກເຂົາ,
ແທ້ຈິງແລ້ວ, ອາວຸດແຫ່ງສົງຄາມທັງໝົດ
ຂອງພວກເຂົາ; ແລະ ພວກເຂົາເປັນຊາວ
ເລມັນທັງໝົດ.
14 ແຕ່ຊາວອາມາລະໄຄບໍ່ໄດ້ [ກ]ປ່ຽນໃຈ
ເຫລື້ອມໃສ ເລີຍນອກຈາກຄົນດຽວເທົ່າ
ນັ້ນ; ທັງບໍ່ມີ [ຂ]ຊາວອະມິວລອນຄົນໃດເລີຍ
ທີ່ປ່ຽນໃຈເຫລື້ອມໃສ; ແຕ່ພວກເຂົາເຮັດ
ໃຈແຂງກະດ້າງ, ແລະ ໃຈຂອງຊາວເລມັນ
ຜູ້ທີ່ຢູ່ໃນເຂດນັ້ນຂອງແຜ່ນດິນກໍຄືກັນບໍ່ວ່າ
ໃນບ່ອນໃດກໍຕາມທີ່ພວກເຂົາຢູ່, ແທ້ຈິງ
ແລ້ວ, ແລະ ລວມທັງໝູ່ບ້ານທັງໝົດຂອງ
ພວກເຂົາ ແລະ ເມືອງທັງໝົດຂອງພວກ
ເຂົາ.
15 ສະນັ້ນ, ພວກເຮົາຈຶ່ງໄດ້ຕັ້ງຊື່ເມືອງ
ທັງໝົດຂອງຊາວເລມັນຜູ້ທີ່ໄດ້ກັບໃຈມາ
ສູ່ຄວາມຮູ້ເລື່ອງຄວາມຈິງ ແລະ ປ່ຽນໃຈ
ເຫລື້ອມໃສ.
16 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ກະສັດ ແລະ ຜູ້ທີ່ປ່ຽນໃຈເຫລື້ອມໃສປາດ
ຖະໜາທີ່ຈະມີຊື່ອີກຊື່ໜຶ່ງ, ເພື່ອວ່າພວກ
ເຂົາຈະໄດ້ມີຄວາມແຕກຕ່າງຈາກອ້າຍ
ນ້ອງຂອງພວກເຂົາ; ສະນັ້ນ ກະສັດຈຶ່ງໄດ້

5 *ກ* ແອວ 37:19.
*ຂ* ແອວ 63:12.
ຄມພ ພຣະຄຳພີ.
6 *ກ* ຄມພ ປ່ຽນໃຈ, ການ
ປ່ຽນໃຈເຫລື້ອມໃສ.
*ຂ* ແອວ 27:27.
8 *ກ* ແອວ 26:3, 31.
12 *ກ* ມຊຢ 22:8, 11.
13 *ກ* ແອວ 53:10.
14 *ກ* ແອວ 24:29.
*ຂ* ມຊຢ 23:31–39.

ປຶກສາຫາລືກັບອາໂຣນ ແລະ ປະໂລຫິດ
ຫລາຍຄົນກ່ຽວກັບຊື່ທີ່ຈະຕັ້ງໃຫ້ພວກເຂົາ
ນັ້ນ, ເພື່ອພວກເຂົາຈະໄດ້ມີຄວາມແຕກ
ຕ່າງອອກໄປ.
17 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ຕັ້ງຊື່ວ່າຊາວ [ກ]ອານໄທ-ນີໄຟ-
ລີໄຮ; ແລະ ພວກເຂົາຈຶ່ງໄດ້ຖືກເອີ້ນຕາມຊື່
ນີ້ ແລະ ບໍ່ຖືກເອີ້ນວ່າຊາວເລມັນອີກຕໍ່ໄປ.
18 ແລະ ພວກເຂົາເລີ່ມເປັນຄົນສ້າງ
ສາພັດທະນາແທ້ໆ; ແທ້ຈິງແລ້ວ, ພວກ
ເຂົາເປັນເພື່ອນມິດກັບຊາວນີໄຟ; ສະນັ້ນ,
ພວກເຂົາຈຶ່ງໄດ້ເປີດການສື່ສານກັນ, ແລະ
[ກ]ການສາບແຊ່ງຂອງພຣະເຈົ້າຈຶ່ງບໍ່ໄດ້ຕິດ
ຕາມພວກເຂົາອີກຕໍ່ໄປ.

## ບົດທີ 24

*ຊາວເລມັນມາຕໍ່ສູ້ກັບຜູ້ຄົນຂອງພຣະເຈົ້າ—ຊາວອານໄທ-ນີໄຟ-ລີໄຮ ມີຄວາມປິຕິຍິນດີໃນພຣະຄຣິດ ແລະ ເຫລົ່າທູດໄດ້ມາຢ້ຽມຢາມພວກເຂົາ—ພວກເຂົາເລືອກເອົາຄວາມຕາຍ ແທນທີ່ຈະປົກປ້ອງຕົນເອງ—ຊາວເລມັນຫລາຍຄົນຕື່ມອີກໄດ້ປ່ຽນໃຈເຫລື້ອມໃສ. ປະມານ 90–77 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຊາວອາມາລະໄຄ ແລະ ຊາວອະມິວລອນ
ແລະ ຊາວເລມັນທີ່ຢູ່ໃນແຜ່ນດິນອະມິວ
ລອນ, ແລະ ແຜ່ນດິນເຮລາມ, ແລະ ຜູ້ທີ່
ຢູ່ໃນແຜ່ນດິນ [ກ]ເຢຣູຊາເລັມນຳອີກ, ແລະ
ໂດຍສະຫລຸບ, ໃນແຜ່ນດິນທັງໝົດໂດຍ
ອ້ອມຮອບທີ່ຍັງບໍ່ທັນໄດ້ປ່ຽນໃຈເຫລື້ອມ
ໃສ ແລະ ບໍ່ໄດ້ຮັບຊື່ວ່າ [ຂ]ອານໄທ-ນີໄຟ-
ລີໄຮ ຖືກຊາວອາມາລະໄຄ ແລະ ຊາວອະ
ມິວລອນ ຍຸຍົງໃຫ້ຄຽດແຄ້ນໃຫ້ພີ່ນ້ອງຂອງ
ຕົນ.
2 ແລະ ຄວາມກຽດຊັງຂອງພວກເຂົາຕໍ່
ຄົນພວກນັ້ນຮຸນແຮງຫລາຍຂຶ້ນ, ແມ່ນເຖິງ
ຂະໜາດທີ່ພວກເຂົາເລີ່ມກໍ່ການກະບົດ
ຕໍ່ກະສັດຂອງພວກເຂົາ, ເຖິງຂະໜາດທີ່
ພວກເຂົາບໍ່ຢາກໃຫ້ເພິ່ນເປັນກະສັດຂອງ
ພວກເຂົາ; ສະນັ້ນ, ພວກເຂົາຈຶ່ງໄດ້ຈັບ
ອາວຸດຂຶ້ນມາຕໍ່ສູ້ກັບຊາວອານໄທ-ນີໄຟ
-ລີໄຮ.
3 ບັດນີ້ກະສັດໄດ້ມອບລາຊາອານາຈັກ
ໃຫ້ແກ່ລູກຊາຍຂອງເພິ່ນ, ແລະ ເພິ່ນໄດ້
ເອີ້ນລູກຊາຍຄົນນັ້ນຂອງເພິ່ນວ່າ ອານ
ໄທ-ນີໄຟ-ລີໄຮ.
4 ແລະ ກະສັດໄດ້ສິ້ນຊີວິດໄປໃນປີດຽວ
ກັນນັ້ນຕອນຊາວເລມັນເລີ່ມຕຽມການສູ້
ຮົບກັບຜູ້ຄົນຂອງພຣະເຈົ້າ.
5 ແລະ ບັດນີ້ເມື່ອອຳໂມນ ແລະ ພີ່ນ້ອງ
ຂອງລາວ ແລະ ຄົນທັງໝົດທີ່ຂຶ້ນມາຢູ່ກັບ
ລາວເຫັນການຕຽມພ້ອມຂອງຊາວເລມັນ
ເພື່ອຈະທຳລາຍພີ່ນ້ອງຂອງພວກເຂົາ,
ພວກເຂົາຈຶ່ງໄດ້ພາກັນອອກມາຫາແຜ່ນ
ດິນມີດີອານ, ແລະ ບ່ອນນັ້ນອຳໂມນໄດ້
ພົບພໍ້ກັບພີ່ນ້ອງຂອງລາວທັງໝົດ; ແລະ
ຈາກບ່ອນນັ້ນພວກເຂົາໄດ້ໄປຫາແຜ່ນດິນ
ອີດຊະມາເອນ ເພື່ອຈະໄດ້ມີການປະຊຸມ
[ກ]ປຶກສາຫາລືກັບລາໂມໄນ ແລະ ກັບອານ
ໄທ-ນີໄຟ-ລີໄຮ ນ້ອງຊາຍຂອງເພິ່ນວ່າ
ຄວນຈະເຮັດແນວໃດເພື່ອຈະປ້ອງກັນຕົນ
ເອງຈາກຊາວເລມັນ.
6 ບັດນີ້ບໍ່ມີຈັກຄົນເລີຍໃນບັນດາຜູ້ຄົນ
ທັງໝົດທີ່ໄດ້ປ່ຽນໃຈເຫລື້ອມໃສໃນພຣະ

17 *ກ* ຄມພ ອານໄທ-ນີໄຟ-ລີໄຮ.
18 *ກ* 1 ນຟ 2:23; 2 ນຟ 30:5–6; 3 ນຟ 2:14–16.
**24** 1 *ກ* ແອວ 21:1.
*ຂ* ແອວ 25:1, 13.
5 *ກ* ແອວ 27:4–13.

ຜູ້ເປັນເຈົ້າທີ່ຈະອອກມາຈັບອາວຸດຂຶ້ນຕໍ່ສູ້
ກັບພີ່ນ້ອງຂອງຕົນ; ແທ້ຈິງແລ້ວ, ບໍ່ມີຈັກ
ຄົນເລີຍທີ່ຍອມຕຽມພ້ອມເພື່ອກໍ່ສົງຄາມ;
ແທ້ຈິງແລ້ວ, ກະສັດຂອງພວກເຂົາກໍໄດ້ສັ່ງ
ພວກເຂົາວ່າບໍ່ໃຫ້ເຮັດອີກ.
7 ບັດນີ້, ນີ້ຄືຄຳເວົ້າທີ່ກະສັດກ່າວກັບຜູ້
ຄົນກ່ຽວກັບເລື່ອງນີ້: ຂ້າພະເຈົ້າຂອບພຣະ
ໄທພຣະເຈົ້າ ແລະ ຜູ້ຄົນທີ່ແສນດີຂອງຂ້າ
ພະເຈົ້າ, ຊຶ່ງພຣະເຈົ້າຊົງຍິ່ງໃຫຍ່ໃນພຣະ
ກະລຸນາທິຄຸນທີ່ໄດ້ສົ່ງຊາວນີໄຟພີ່ນ້ອງ
ຂອງພວກເຮົາມາຫາພວກເຮົາ ເພື່ອສັ່ງ
ສອນພວກເຮົາ ເພື່ອເຮັດໃຫ້ພວກເຮົາສຳ
ນຶກເຖິງ [ກ]ຮີດຄອງປະເພນີຂອງບັນພະບຸ
ລຸດທີ່ຊົ່ວຮ້າຍຂອງພວກເຮົານັ້ນ.
8 ແລະ ຈົ່ງເບິ່ງ, ຂ້າພະເຈົ້າຂອບພຣະ
ໄທພຣະເຈົ້າຜູ້ຍິ່ງໃຫຍ່ຂອງຂ້າພະເຈົ້າທີ່
ພຣະອົງໄດ້ປະທານສ່ວນໜຶ່ງຂອງພຣະວິນ
ຍານຂອງພຣະອົງໃຫ້ແກ່ພວກເຮົາ ເພື່ອ
ເຮັດໃຫ້ໃຈຂອງພວກເຮົາອ່ອນລົງຈົນວ່າ
ພວກເຮົາໄດ້ເປີດການສື່ສານກັບຊາວນີໄຟ
ຜູ້ທີ່ເປັນພີ່ນ້ອງຂອງພວກເຮົາ.
9 ແລະ ຈົ່ງເບິ່ງ, ຂ້າພະເຈົ້າຂອບພຣະ
ໄທພຣະເຈົ້າຂອງຂ້າພະເຈົ້າທີ່ໄດ້ເປີດ
ການສື່ສານນີ້ ມັນເຮັດໃຫ້ພວກເຮົາສຳນຶກ
ເຖິງ [ກ]ບາບຂອງພວກເຮົາ, ແລະ ເຖິງການ
ຄາດຕະກຳອັນຫລວງຫລາຍທີ່ພວກເຮົາ
ໄດ້ກະທຳໄປ.
10 ແລະ ຂ້າພະເຈົ້າຂອບພຣະໄທພຣະ
ເຈົ້ານຳອີກ, ແທ້ຈິງແລ້ວ, ພຣະເຈົ້າຜູ້ຊົງ
ຍິ່ງໃຫຍ່ຂອງຂ້າພະເຈົ້າທີ່ພຣະອົງໄດ້ອະນຸ
ຍາດໃຫ້ພວກເຮົາເພື່ອພວກເຮົາຈະໄດ້ກັບ
ໃຈຈາກສິ່ງເຫລົ່ານີ້, ແລະ ທີ່ພຣະອົງໄດ້ໃຫ້
[ກ]ອະໄພແກ່ພວກເຮົາ ໃນບາບ ແລະ ການ
ຄາດຕະກຳອັນຫລວງຫລາຍ ຊຶ່ງພວກເຮົາ
ໄດ້ກະທຳໄປແລ້ວ, ແລະ ເອົາ [ຂ]ຄວາມ
ຮູ້ສຶກຜິດອອກຈາກໃຈຂອງພວກເຮົາໄປ
ໂດຍທາງພຣະຄຸນຄວາມດີຂອງພຣະບຸດ
ຂອງພຣະອົງ.
11 ແລະ ບັດນີ້ຈົ່ງເບິ່ງ, ອ້າຍນ້ອງຂອງ
ຂ້າພະເຈົ້າ, ເນື່ອງດ້ວຍວ່າ ພວກເຮົາໄດ້
ກະທຳທຸກສິ່ງທີ່ພວກເຮົາສາມາດ (ໃນ
ຖານະທີ່ພວກເຮົາເປັນພວກທີ່ຫລົງທາງ
ໃນບັນດາມະນຸດຊາດ) ທີ່ໄດ້ກັບໃຈຈາກ
ບາບທັງໝົດຂອງພວກເຮົາ, ແລະ ຈາກ
ການຄາດຕະກຳອັນຫລວງຫລາຍທີ່ພວກ
ເຮົາໄດ້ກະທຳໄປ, ແລະ ໃຫ້ພຣະເຈົ້າເອົາ
ມັນ [ກ]ອອກຈາກໃຈຂອງພວກເຮົາ ຫລື ວ່າ
ສິ່ງທີ່ພວກເຮົາສາມາດເຮັດໄດ້ນັ້ນພຽງແຕ່
ກັບໃຈຢ່າງແນ່ນອນຕໍ່ພຣະເຈົ້າ ເພື່ອພຣະ
ອົງຈະເອົາຮອຍເປື້ອນຂອງພວກເຮົາອອກ
ໄປ—
12 ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະ
ເຈົ້າ, ເນື່ອງຈາກວ່າພຣະເຈົ້າໄດ້ເອົາຮອຍ
ເປື້ອນຂອງພວກເຮົາອອກໄປ, ແລະ ດາບ
ຂອງພວກເຮົາກັບມາສົດໃສ, ແລ້ວພວກ
ເຮົາຢ່າໄດ້ເຮັດໃຫ້ດາບຂອງພວກເຮົາເປິ
ເປື້ອນໄປດ້ວຍເລືອດຂອງພີ່ນ້ອງຂອງ
ພວກເຮົາອີກເລີຍ.
13 ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ຢ່າເລີຍ ຂໍໃຫ້ພວກເຮົາເກັບດາບ
ຂອງພວກເຮົາໄວ້ເພື່ອມັນ ຈະບໍ່ເປິເປື້ອນ
ດ້ວຍເລືອດຂອງພີ່ນ້ອງຂອງພວກເຮົາອີກ;
ເພາະວ່າຖ້າຫາກພວກເຮົາເຮັດໃຫ້ດາບ
ຂອງພວກເຮົາເປິເປື້ອນອີກ ພວກເຮົາຈະ
[ກ]ລ້າງມັນໃຫ້ສົດໃສບໍ່ໄດ້ໂດຍທາງໂລຫິດ
ຂອງພຣະບຸດຂອງພຣະເຈົ້າ ຜູ້ທີ່ຍິ່ງໃຫຍ່

7 *ກ* ມຊຍ 1:5.
9 *ກ* ຄພ 18:44.
10 *ກ* ດນອ 9:9.
*ຂ* ຄນພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
11 *ກ* ອຊຢ 53:4–6.
13 *ກ* ພນມ 1:5.

ຂອງພວກເຮົາ ຊຶ່ງຈະຫລັ່ງໄຫລເພື່ອການ
ຊົດໃຊ້ແທນບາບຂອງພວກເຮົາ.
14 ແລະ ພຣະເຈົ້າຜູ້ຍິ່ງໃຫຍ່ມີຄວາມ
ເມດຕາຕໍ່ພວກເຮົາ, ແລະ ກະທຳໃຫ້ສິ່ງ
ເຫລົ່ານີ້ເປັນທີ່ຮູ້ຈັກແກ່ພວກເຮົາ ເພື່ອ
ພວກເຮົາຈະບໍ່ຕາຍ; ແທ້ຈິງແລ້ວ, ພຣະອົງ
ໄດ້ເຮັດໃຫ້ສິ່ງເຫລົ່ານີ້ເປັນທີ່ຮູ້ຈັກແກ່ພວກ
ເຮົາລ່ວງໜ້າ ເພາະວ່າພຣະອົງຮັກ [ກ]ຈິດ
ວິນຍານຂອງພວກເຮົາເຊັ່ນດຽວກັນກັບ
ທີ່ພຣະອົງຮັກລູກຫລານຂອງພວກເຮົາ;
ສະນັ້ນ, ຍ້ອນຄວາມເມດຕາປານີຂອງ
ພຣະອົງ, ພຣະອົງໄດ້ສະເດັດມາຢ້ຽມຢາມ
ພວກເຮົາໂດຍທູດຂອງພຣະອົງ, ເພື່ອຈະ
ໄດ້ເຮັດໃຫ້ [ຂ]ແຜນແຫ່ງຄວາມລອດເປັນທີ່
ຮູ້ຈັກແກ່ພວກເຮົາເຊັ່ນດຽວກັນກັບຄົນລຸ້ນ
ຫລັງ.
15 ໂອ້, ພຣະເຈົ້າຂອງພວກເຮົາເມດຕາ
ປານີພວກເຮົາຊ່ຳໃດ! ແລະ ບັດນີ້ຈົ່ງເບິ່ງ,
ເນື່ອງຈາກວ່າສິ່ງທີ່ພວກເຮົາສາມາດເຮັດ
ໄດ້ຄືເອົາຮອຍເປື້ອນຂອງພວກເຮົາອອກ
ຈາກພວກເຮົາໄປ, ເພື່ອເຮັດໃຫ້ດາບຂອງ
ພວກເຮົາສົດໃສ, ຂໍໃຫ້ພວກເຮົາເຊື່ອງມັນ
ໄວ້ເພື່ອມັນຈະສົດໃສ, ເພື່ອເປັນປະຈັກ
ພະຍານຕໍ່ພຣະເຈົ້າຂອງພວກເຮົາໃນວັນ
ສຸດທ້າຍ, ຫລື ໃນມື້ທີ່ພວກເຮົາຈະຖືກນຳ
ມາຢືນຢູ່ຕໍ່ພຣະພັກຂອງພຣະອົງເພື່ອຮັບ
ການພິພາກສາ, ວ່າພວກເຮົາບໍ່ໄດ້ເຮັດໃຫ້
ດາບຂອງພວກເຮົາເປິເປື້ອນດ້ວຍເລືອດ
ຂອງພີ່ນ້ອງຂອງພວກເຮົານັບຕັ້ງແຕ່ພຣະ
ອົງໃຫ້ພຣະຄຳຂອງພຣະອົງແກ່ພວກເຮົາ
ແລະ ເຮັດໃຫ້ພວກເຮົາຂາວສະອາດຕາມ
ນັ້ນ.
16 ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ,
ຖ້າຫາກພີ່ນ້ອງຂອງພວກເຮົາຍັງພະຍາ
ຍາມຈະທຳລາຍພວກເຮົາແລ້ວ, ຈົ່ງເບິ່ງ,
ພວກເຮົາຈົ່ງເຊື່ອງດາບຂອງພວກເຮົາໄວ້,
ແທ້ຈິງແລ້ວ, ພວກເຮົາຈະຝັງມັນໃຫ້ເລິກ
ລົງໃນແຜ່ນດິນ, ເພື່ອມັນຈະສົດໃສ, ແລະ
ເພື່ອເປັນປະຈັກພະຍານໃນວັນສຸດທ້າຍ
ວ່າ, ພວກເຮົາບໍ່ໄດ້ໃຊ້ມັນ ແລະ ຖ້າຫາກພີ່
ນ້ອງຂອງພວກເຮົາທຳລາຍພວກເຮົາ, ຈົ່ງ
ເບິ່ງ, ພວກເຮົາຈະ [ກ]ໄປເຝົ້າພຣະເຈົ້າຂອງ
ພວກເຮົາ ແລະ ພວກເຮົາຈະລອດ.
17 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອກະສັດຈົບຂໍ້ຄວາມເຫລົ່ານີ້ແລ້ວ,
ຜູ້ຄົນທັງໝົດທີ່ໄດ້ມາຊຸມນຸມກັນກໍໄດ້ເອົາ
ດາບ ແລະ ອາວຸດທັງໝົດຂອງພວກເຂົາທີ່
ໃຊ້ໃນການນອງເລືອດມະນຸດດ້ວຍກັນນັ້ນ
ມາ, ແລະ ພວກເຂົາໄດ້ [ກ]ຝັງມັນໄວ້ໃຫ້ເລິກ
ລົງໃນແຜ່ນດິນ.
18 ແລະ ພວກເຂົາເຮັດແບບນີ້ຕາມ
ຄວາມຄິດເຫັນຂອງພວກເຂົາວ່າ ມັນຈະ
ເປັນປະຈັກພະຍານຕໍ່ພຣະເຈົ້າ ແລະ ຕໍ່
ມະນຸດຊາດດ້ວຍກັນວ່າ ພວກເຂົາ [ກ]ບໍ່ໄດ້
ໃຊ້ອາວຸດເພື່ອການນອງເລືອດກັນອີກ
ເລີຍ; ແລະ ພວກເຂົາໄດ້ເຮັດແບບນີ້ໂດຍ
ຖວາຍການຢືນຢັນ ແລະ [ຂ]ຄຳໝັ້ນສັນຍາ
ໄວ້ກັບພຣະເຈົ້າວ່າ ແທນທີ່ຈະນອງເລືອດ
ກັນ ພວກເຂົາຈະຍອມ [ຄ]ເສຍສະລະຊີວິດ
ຂອງພວກເຂົາເອງ; ແລະ ແທນທີ່ຈະເອົາ
ສິ່ງຂອງຈາກພີ່ນ້ອງໄປ ພວກເຂົາຈະເປັນ
ຜູ້ທີ່ເອົາໃຫ້; ແລະ ແທນທີ່ຈະໃຊ້ເວລາ
ຂອງພວກເຂົາໄປໃນຄວາມຂີ້ຄ້ານມັກງ່າຍ
ພວກເຂົາຈະເຮັດວຽກຢ່າງດຸໝັ່ນດ້ວຍມື
ຂອງພວກເຂົາເອງ.
19 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ,

14 *ກ* ຄມພ ຈິດວິນຍານ—ຄຸນຄ່າຂອງຈິດວິນຍານ.
*ຂ* ຄມພ ແຜນແຫ່ງການໄຖ່.
16 *ກ* ແອວ 40:11–15.
17 *ກ* ຮລມ 15:9.
18 *ກ* ແອວ 53:11.
*ຂ* ຄມພ ພັນທະສັນຍາ.
*ຄ* ຄມພ ເສຍສະລະ, ການເສຍສະລະ.

ເມື່ອ ຊາວ ເລມັນ ຖືກ ນຳ ມາ ສູ່ ຄວາມ ເຊື່ອ,
ແລະ ມີຄວາມຮູ້ເຖິງເລື່ອງຂອງຄວາມຈິງ,
ແລະ ພວກເຂົາ [ກ]ໝັ້ນຄົງຖາວອນ ແລະ ຈະ
ຍອມແພ້ຈົນເຖິງຄວາມຕາຍແທນທີ່ຈະກະ
ທຳບາບ; ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ
ພວກເຂົາໄດ້ຝັງອາວຸດແຫ່ງສັນຕິສຸກຂອງ
ພວກເຂົາໄວ້, ຫລື ພວກເຂົາໄດ້ຝັງອາວຸດ
ແຫ່ງສົງຄາມເພື່ອສັນຕິສຸກ.

20 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນຜູ້ທີ່ພີ່ນ້ອງຂອງພວກເຂົາໄດ້ຕຽມ
ພ້ອມເພື່ອກໍ່ສົງຄາມ ໄດ້ຍົກທັບຂຶ້ນມາເຖິງ
ແຜ່ນດິນນີໄຟ ດ້ວຍຈຸດປະສົງຈະປະຫານ
ຊີວິດຂອງກະສັດ, ແລະ ຈະໄດ້ແຕ່ງຕັ້ງຄົນ
ອື່ນຂຶ້ນແທນ, ແລະ ເພື່ອຈະທຳລາຍຜູ້ຄົນ
ຂອງອານໄທ-ນີໄຟ-ລີໄຮ ອອກໄປຈາກ
ແຜ່ນດິນນຳອີກ.

21 ແລະ ບັດນີ້ເມື່ອຜູ້ຄົນເຫັນວ່າ ພວກ
ນັ້ນກຳລັງມາໂຈມຕີພວກຕົນ, ພວກເຂົາຈຶ່ງ
ໄດ້ອອກໄປພົບກັບພວກນັ້ນ ແລະ [ກ]ນອນ
ລົງກັບພື້ນດິນຕໍ່ໜ້າພວກນັ້ນ, ແລະ ເລີ່ມ
ເອີ້ນຫາພຣະນາມຂອງພຣະຜູ້ເປັນເຈົ້າ;
ພວກເຂົາໄດ້ຢູ່ໃນທ່າທີນີ້ ເວລາຊາວເລມັນ
ເລີ່ມເຂົ້າໂຈມຕີ ແລະ ເລີ່ມຂ້າພວກເຂົາ
ດ້ວຍດາບ.

22 ແລະ ເຖິງແມ່ນວ່າບໍ່ມີຜູ້ໃດຕໍ່ຕ້ານ
ເລີຍ, ແຕ່ຊາວເລມັນກໍຍັງໄດ້ຂ້າພວກເຂົາ
ຊຶ່ງເປັນຈຳນວນໜຶ່ງພັນຫ້າຄົນ, ແລະ ພວກ
ເຮົາຮູ້ວ່າ ພວກເຂົາໄດ້ຮັບພອນ, ເພາະວ່າ
ພວກເຂົາໄດ້ໄປຢູ່ກັບພຣະເຈົ້າຂອງພວກ
ເຂົາແລ້ວ.

23 ບັດນີ້ເມື່ອຊາວເລມັນເຫັນວ່າ ພີ່ນ້ອງ
ຂອງຕົນບໍ່ຍອມໜີຈາກດາບ, ທັງບໍ່ຍອມ
ຫັນໜີໄປທາງຂວາ ຫລື ຊ້າຍມື, ມີແຕ່ນອນ
ຢູ່ ແລະ [ກ]ຕາຍໄປ, ແລະ ພວກເຂົາສັນລະ
ເສີນພຣະເຈົ້າໃນຂະນະທີ່ກຳລັງຈະຕາຍຢູ່
ພາຍໃຕ້ຄົມດາບ—

24 ບັດ ນີ້ ເມື່ອ ຊາວ ເລມັນ ເຫັນ ເຊັ່ນ ນີ້
ພວກເຂົາຈຶ່ງໄດ້ [ກ]ຢຸດການຂ້າຂອງພວກ
ເຂົາ; ແລະ ມີຢູ່ເປັນຈຳນວນຫລວງຫລາຍ
ຊຶ່ງໃຈຂອງພວກເຂົາ [ຂ]ພອງຂຶ້ນຢູ່ພາຍໃນ
ເພາະວ່າພີ່ນ້ອງຂອງພວກເຂົາລົ້ມຕາຍຢູ່
ພາຍໃຕ້ດາບຂອງພວກເຂົາ, ສະນັ້ນ ພວກ
ເຂົາຈຶ່ງໄດ້ກັບໃຈຈາກສິ່ງທີ່ພວກເຂົາໄດ້
ກະທຳໄປນັ້ນ.

25 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ໂຍນອາວຸດແຫ່ງສົງຄາມລົງ,
ແລະ ພວກເຂົາບໍ່ຍອມຈັບມັນອີກ ເພາະ
ການສັງເວດຢ່າງຮ້າຍແຮງຈາກການຄາດ
ຕະກຳທີ່ຕົນໄດ້ກະທຳໄປນັ້ນ ແລະ ພວກ
ເຂົາຈຶ່ງໄດ້ນອນລົງຄືກັນກັບພີ່ນ້ອງຂອງ
ພວກເຂົາ, ໂດຍຫວັງໃນຄວາມເມດຕາປາ
ນີຂອງຊາວເລມັນ ຊຶ່ງຍົກດາບຂຶ້ນເພື່ອຈະ
ຂ້າພວກເຂົາ.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນຂອງພຣະເຈົ້າໄດ້ມາຫ້ອມໂຮມກັນໃນ
ມື້ນັ້ນເປັນຈຳນວນຫລາຍກວ່າຄົນທີ່ຖືກຂ້າ
ຕາຍ; ແລະ ພວກທີ່ຖືກຂ້າຕາຍນັ້ນເປັນ
ຄົນຊອບທຳ, ສະນັ້ນ ພວກເຮົາຈຶ່ງບໍ່ມີເຫດ
ຜົນທີ່ຈະສົງໃສວ່າ ພວກເຂົາຈະ [ກ]ລອດຫລື
ບໍ່.

27 ແລະ ບໍ່ມີຄົນຊົ່ວຈັກຄົນທີ່ຖືກຂ້າຕາຍ
ໃນ ບັນ ດາ ຄົນ ເຫລົ່າ ນັ້ນ; ແຕ່ ມີ ຈຳນ ວນ
ຫລາຍພັນຄົນທີ່ຖືກນຳມາສູ່ເລື່ອງຄວາມ
ຈິງ; ພວກເຮົາຈຶ່ງເຫັນວ່າພຣະເຈົ້າກະທຳ
ໃນຫລາຍວິທີ [ກ]ທາງເພື່ອຄວາມລອດຂອງ
ຜູ້ຄົນຂອງພຣະອົງ.

19 *ກ* ຄມພ ສັດທາ.
21 *ກ* ແອວ 27:3.
23 *ກ* ແອວ 26:32.
24 *ກ* ແອວ 25:1.
*ຂ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.
26 *ກ* ພນມ 14:13.
27 *ກ* ອຊຢ 55:8–9; ແອວ 37:6–7.

28 ບັດນີ້ຊາວເລມັນເປັນຈຳນວນຫລວງ
ຫລາຍຜູ້ທີ່ໄດ້ຂ້າພີ່ນ້ອງຂອງພວກເຂົານັ້ນ
ຄື ຊາວອາມາລະໄຄ ແລະ ຊາວອະມິວ
ລອນ ຊຶ່ງພວກເຂົາເຮັດຕາມ [ກ]ລະບຽບຂອງ
[ຂ]ຊາວນີຮໍ.
29 ບັດນີ້, ໃນບັນດາຜູ້ທີ່ມາຮ່ວມກັບຜູ້
ຄົນຂອງພຣະຜູ້ເປັນເຈົ້ານັ້ນ, [ກ]ບໍ່ມີຈັກຄົນ
ເລີຍທີ່ເປັນຊາວອາມາລະໄຄ ຫລື ຊາວອະ
ມິວລອນ ຫລື ຜູ້ທີ່ເຮັດຕາມລະບຽບຂອງ
ຊາວນີຮໍ, ມີແຕ່ຜູ້ສືບຕະກຸນໂດຍແທ້ຈິງ
ຂອງເລມັນ ແລະ ເລມູເອນ.
30 ແລະ ພວກເຮົາຈຶ່ງຫລິງເຫັນໄດ້ຢ່າງ
ແຈ່ມແຈ້ງວ່າ ຫລັງຈາກພວກໃດພວກໜຶ່ງ
ທີ່ເຄີຍໄດ້ຮັບ [ກ]ຄວາມສະຫວ່າງໂດຍພຣະ
ວິນຍານຂອງພຣະເຈົ້າມາແລ້ວ, ແລະ ມີ
[ຂ]ຄວາມຮູ້ຢ່າງກວ້າງຂວາງເຖິງສິ່ງທີ່ກ່ຽວ
ກັບຄວາມຊອບທຳ ແລະ [ຄ]ຕົກເຂົ້າໄປສູ່
ບາບ ແລະ ການລ່ວງລະເມີດ, ພວກເຂົາ
ຈຶ່ງກັບມາເປັນຄົນແຂງກະດ້າງຫລາຍຂຶ້ນ,
ແລະ ສະພາບຂອງພວກເຂົາຈຶ່ງກັບມາ
[ງ]ຊົ່ວຮ້າຍກວ່າຜູ້ທີ່ບໍ່ເຄີຍຮູ້ເລື່ອງເຫລົ່ານີ້
ມາກ່ອນຊ້ຳອີກ.

## ບົດທີ 25

*ຄວາມທຸກຮານຂອງຊາວເລມັນແຜ່ຂະຫຍາຍອອກໄປ—ລູກຫລານຂອງພວກປະໂລຫິດຂອງກະສັດໂນອາຕາຍດັ່ງທີ່ອະບິນາໄດໄດ້ທຳນາຍໄວ້—ຊາວເລມັນຫລາຍຄົນໄດ້ປ່ຽນໃຈເຫລື້ອມໃສ ແລະ ເຂົ້າມາຮ່ວມກັບຜູ້ຄົນຂອງອານໄທ-ນີໄຟ-ລີໄຮ—ພວກເຂົາເຊື່ອໃນພຣະຄຣິດ ແລະ ຮັກສາກົດຂອງໂມເຊ. ປະມານ 90–77 ປີ ກ່ອນ ຄ.ສ.*

1 ແລະ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງ
ເກີດຂຶ້ນຄື ຊາວເລມັນເຫລົ່ານັ້ນ ໄດ້ມີຄວາມ
ຄຽດແຄ້ນທີ່ສຸດ ເພາະວ່າພວກເຂົາໄດ້ຂ້າພີ່
ນ້ອງຂອງຕົນ; ສະນັ້ນພວກເຂົາຈຶ່ງສາບານ
ວ່າຈະແກ້ແຄ້ນຊາວນີໄຟ; ແລະ ພວກເຂົາ
ບໍ່ໄດ້ພະຍາຍາມຂ້າຜູ້ຄົນຂອງ [ກ]ອານໄທ-
ນີໄຟ-ລີໄຮ ອີກຕໍ່ໄປໃນເວລານັ້ນ.
2 ແຕ່ພວກເຂົາໄດ້ຍົກກອງທັບຂ້າມໄປ
ໃນຊາຍແດນຂອງແຜ່ນດິນເຊຣາເຮັມລາ,
ແລະ ເຂົ້າມາໂຈມຕີຜູ້ຄົນ ຊຶ່ງຢູ່ໃນແຜ່ນດິນ
ອຳໂມນໄນຮາ ແລະ [ກ]ທຳລາຍພວກເຂົາ.
3 ແລະ ຫລັງຈາກນັ້ນ, ພວກເຂົາໄດ້ມີ
ການສູ້ຮົບກັບຊາວນີໄຟຫລາຍຄັ້ງ, ຊຶ່ງ
ພວກເຂົາໄດ້ຖືກຂັບໄລ່ອອກໄປ ແລະ ຖືກ
ຂ້າຕາຍ.
4 ແລະ ໃນບັນດາຊາວເລມັນທີ່ຖືກຂ້າ
ຕາຍນັ້ນມີ [ກ]ລູກຫລານຂອງອະມິວລອນ
ແລະ ພີ່ນ້ອງຂອງລາວຜູ້ເປັນພວກປະໂລ
ຫິດຂອງໂນອາ, ແລະ ພວກເຂົາເຫລົ່ານັ້ນ
ເກືອບທັງໝົດ ຖືກຂ້າຕາຍດ້ວຍນ້ຳມືຂອງ
ຊາວນີໄຟ;
5 ແລະ ພວກທີ່ຍັງເຫລືອຢູ່ນັ້ນໄດ້ໜີເຂົ້າ
ໄປໃນຖິ່ນແຫ້ງແລ້ງກັນດານທາງຕາເວັນ
ອອກ ແລະ ໄປຍາດແຍ່ງເອົາອຳນາດ ແລະ
ສິດອຳນາດປົກຄອງຊາວເລມັນ, ຈຶ່ງເຮັດໃຫ້
ຊາວເລມັນຫລາຍຄົນຖືກ [ກ]ຂ້າຕາຍດ້ວຍໄຟ
ເພາະຄວາມເຊື່ອຖືຂອງພວກເຂົາ—

28 ກ ແອວ 21:4.
ຂ ແອວ 1:15; 2:1, 20.
29 ກ ແອວ 23:14.
30 ກ ມທ 12:45.
ຂ ຮຣ 10:26;
ແອວ 47:36.
ຄ 2 ນຟ 31:14;
ແອວ 9:19.
ຄມພ ປະຖິ້ມຄວາມເຊື່ອ,
ການປະຖິ້ມຄວາມເຊື່ອ.
ງ 2 ປຕ 2:20–21.
**25** 1 ກ ຄມພ ອານໄທ-ນີໄຟ-ລີໄຮ.
2 ກ ແອວ 8:16; 16:9.
4 ກ ມຊຢ 23:35.
5 ກ ມຊຢ 17:15.

6 ເພາະ ຫລັງ ຈາກ ທີ່ [ກ]ພວກ ເຂົາ ຫລາຍ ຄົນ ໄດ້ຮັບການສູນເສຍຢ່າງໜັກ ແລະ ມີ ຄວາມ ທຸກ ນັ້ນຫລາຍ, ກໍ ເລີ່ມສຳນຶກໃນ ຄວາມ ຊົງ ຈຳ ເຖິງ [ຂ]ຄຳ ເວົ້າຂອງອາໂຣນ ແລະ ພີ່ນ້ອງ ຂອງລາວ ຊຶ່ງ ໄດ້ ສັ່ງສອນ ພວກ ເຂົາ ໃນ ແຜ່ນ ດິນຂອງ ພວກ ເຂົາ; ສະນັ້ນ ພວກເຂົາຈຶ່ງເລີ່ມບໍ່ເຊື່ອຖືໃນ [ຄ]ຮີດ ຄອງປະເພນີຂອງບັນພະບຸລຸດຂອງພວກ ເຂົາ ແລະ ມາເຊື່ອຖືໃນພຣະຜູ້ເປັນເຈົ້າ, ແລະ ວ່າພຣະອົງໄດ້ປະທານອຳນາດອັນ ຍິ່ງໃຫຍ່ໃຫ້ແກ່ຊາວນີໄຟ; ແລະ ຫລາຍຄົນ ໃນພວກເຂົາຈຶ່ງໄດ້ປ່ຽນໃຈເຫລື້ອມໃສດັ່ງ ນີ້ໃນຖິ່ນແຫ້ງແລ້ງກັນດານ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ ທີ່ປົກຄອງທີ່ເຫລືອຢູ່ ຊຶ່ງເປັນລູກຫລານ ຂອງ [ກ]ອະມິວລອນ ໄດ້ເຮັດໃຫ້ພວກເຂົາ ເຫລົ່ານັ້ນ [ຂ]ຕາຍ, ແທ້ຈິງແລ້ວ, ແມ່ນຄົນ ທັງໝົດທີ່ເຊື່ອຖືໃນເລື່ອງເຫລົ່ານີ້.

8 ບັດນີ້ການຕາຍນີ້ເປັນສາເຫດໃຫ້ພີ່ ນ້ອງຂອງພວກເຂົາຫລາຍຄົນຖືກຍຸຍົງໃຫ້ ຄຽດແຄ້ນ ແລະ ເລີ່ມມີການຜິດຖຽງກັນ ຂຶ້ນໃນຖິ່ນແຫ້ງແລ້ງກັນດານ; ແລະ ຊາວ ເລມັນເລີ່ມ [ກ]ຕາມຂ້າລູກຫລານຂອງອະ ມິວລອນ ແລະ ພີ່ນ້ອງຂອງພວກເຂົາ ແລະ ເລີ່ມຂ້າພວກເຂົາ; ແລະ ພວກເຂົາກໍໄດ້ປົບ ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານທາງຕາ ເວັນອອກ.

9 ແລະ ຈົ່ງເບິ່ງ ພວກເຂົາຖືກຊາວເລມັນ ຕາມ ຂ້າ ຈົນ ເຖິງມື້ນີ້. ດັ່ງນັ້ນຄຳເວົ້າຂອງ ອະບີນາໄດຈຶ່ງເຮັດໃຫ້ເກີດຄວາມຈິງຂຶ້ນ ມາແນວນີ້, ຊຶ່ງເພິ່ນໄດ້ເວົ້າໄວ້ກ່ຽວກັບລູກ ຫລານຂອງພວກປະໂລຫິດ ຜູ້ທີ່ເຮັດໃຫ້ ເພິ່ນຕ້ອງໄດ້ຮັບຄວາມຕາຍດ້ວຍໄຟ.

10 ເພາະເພິ່ນໄດ້ເວົ້າກັບພວກເຂົາວ່າ: ສິ່ງໃດກໍຕາມທີ່ພວກເຈົ້າ [ກ]ກະທຳຕໍ່ຂ້າພະ ເຈົ້າ ນີ້ຈະເປັນຮູບແບບຂອງສິ່ງທີ່ຈະມາ ເຖິງ.

11 ແລະ ບັດນີ້ອະບີນາໄດເປັນຄົນທຳ ອິດທີ່ຕ້ອງຮັບ [ກ]ຄວາມຕາຍດ້ວຍໄຟ; ຍ້ອນ ວ່າຄວາມເຊື່ອຖືຂອງເພິ່ນໃນພຣະເຈົ້າ; ບັດນີ້ ນີ້ຄືສິ່ງທີ່ເພິ່ນໝາຍເຖິງຄື ຫລາຍຄົນ ຈະຕ້ອງໄດ້ຮັບຄວາມຕາຍດ້ວຍໄຟຄືກັນ ກັບທີ່ເພິ່ນໄດ້ຮັບ.

12 ແລະ ເພິ່ນໄດ້ເວົ້າກັບພວກປະໂລຫິດ ຂອງໂນອາວ່າ ລູກຫລານຂອງພວກເຂົາ ຈະເຮັດໃຫ້ຄົນເປັນຈຳນວນຫລວງຫລາຍ ທີ່ຈຳເປັນຕ້ອງຕາຍໃນວິທີດຽວກັບເພິ່ນ, ແລະ ວ່າພວກເຂົາຈະແຕກພັດພາກຈາກ ກັນໄປທົ່ວທິບ ແລະ ຖືກຂ້າຕາຍຄືກັນກັບ ແກະທີ່ບໍ່ມີຜູ້ລ້ຽງ, ຖືກຂັບໄລ່ໄປ ແລະ ຖືກ ສັດປ່າຂ້າຕາຍອີກ; ແລະ ບັດນີ້ຈົ່ງເບິ່ງ, ຄຳ ເວົ້າເຫລົ່ານີ້ໄດ້ປະກົດເປັນຄວາມຈິງແລ້ວ, ເພາະວ່າພວກເຂົາຖືກຊາວເລມັນຂັບໄລ່ ໄປ ແລະຖືກລ່າ ແລະ ຖືກທຸບຕີ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ ຊາວເລມັນເຫັນວ່າຕົນເອງເອົາຊະນະຊາວ ນີໄຟບໍ່ໄດ້ ພວກເຂົາຈຶ່ງໄດ້ກັບຄືນໄປຫາ ແຜ່ນດິນຂອງຕົນອີກ; ແລະ ຫລາຍຄົນໄດ້ ຂ້າມມາຢູ່ໃນແຜ່ນດິນອິດຊະມາເອນ ແລະ ຢູ່ໃນແຜ່ນດິນນີໄຟ; ແລະ ໄດ້ລວມຕົວເຂົ້າ ກັບຜູ້ຄົນຂອງພຣະເຈົ້າ, ຊຶ່ງເປັນຜູ້ຄົນຂອງ [ກ]ອານໄທ-ນີໄຟ-ລີໄຮ.

14 ແລະ ພວກເຂົາໄດ້ [ກ]ຝັງອາວຸດແຫ່ງ ສົງຄາມຂອງພວກເຂົາໄວ້, ຄືກັນກັບພີ່ນ້ອງ

6 ກ ອສ ຊາວເລມັນ.
ຂ ແອວ 21:9.
ຄ ແອວ 26:24.
7 ກ ແອວ 21:3; 24:1, 28–30.
ຂ ຄມພ ຕາຍເພາະ ຄວາມເຊື່ອ, ການຕາຍ ເພາະຄວາມເຊື່ອ.
8 ກ ມຊຢ 17:18.
10 ກ ມຊຢ 13:10.
11 ກ ມຊຢ 17:13.
13 ກ ແອວ 23:16–17.
14 ກ ແອວ 24:15; 26:32.

ຂອງພວກເຂົາໄດ້ກະທຳໄປ, ແລະ ພວກ
ເຂົາເລີ່ມເປັນຄົນຊອບທຳ; ແລະ ພວກເຂົາ
ໄດ້ເດີນໃນທາງຂອງພຣະຜູ້ເປັນເຈົ້າ, ແລະ
ໄດ້ຍຶດຖືທີ່ຈະຮັກສາພຣະບັນຍັດ ແລະ ຂໍ້
ກຳນົດຂອງພຣະອົງ.
15 ແທ້ຈິງແລ້ວ, ແລະ ພວກເຂົາໄດ້ຮັກ
ສາກົດຂອງ ໂມເຊ. ເພາະມັນເປັນການ
ສົມຄວນທີ່ພວກເຂົາຕ້ອງຮັກສາກົດຂອງ
ໂມເຊໄວ້, ເພາະຍັງບໍ່ສົມບູນທັງໝົດ. ແຕ່
ເຖິງແມ່ນມີ [ກ]ກົດຂອງໂມເຊ ພວກເຂົາຍັງ
ໄດ້ມຸ້ງຫາການສະເດັດມາຂອງພຣະຄຣິດ
ໂດຍຖືວ່າກົດຂອງໂມເຊເປັນ [ຂ]ແບບໜຶ່ງ
ຂອງການສະເດັດມາຂອງພຣະອົງ, ແລະ
ໂດຍເຊື່ອວ່າພວກເຂົາຕ້ອງຮັກສາການ
ປະຕິບັດ [ຄ]ພາຍນອກເຫລົ່ານັ້ນໄວ້ຈົນເຖິງ
ເວລາທີ່ພຣະອົງຈະເປັນທີ່ເປີດເຜີຍແກ່
ພວກເຂົາ.
16 ບັດ ນີ້ພວກ ເຂົາ ບໍ່ ຄິດ ວ່າ [ກ]ຄວາມ
ລອດຈະມາເຖິງໂດຍກົດຂອງໂມເຊ; ແຕ່
ວ່າ [ຂ]ກົດຂອງໂມເຊມີໄວ້ເພື່ອໃຫ້ສັດທາ
ຂອງພວກເຂົາໝັ້ນຄົງໃນພຣະຄຣິດ; ແລະ
ພວກເຂົາຕັ້ງໝັ້ນໃນ [ຄ]ຄວາມຫວັງດ້ວຍ
ສັດທາ, ຈົນເຖິງຄວາມລອດນິລັນດອນ,
ໂດຍຫວັງໃນວິນຍານແຫ່ງການທຳນາຍ
ຊຶ່ງກ່າວເຖິງສິ່ງທີ່ຈະມາເຖິງ.
17 ແລະ ບັດນີ້ຈົ່ງເບິ່ງ, ອຳໂມນ, ແລະ
ອາໂຣນ, ແລະ ອອມເນີ, ແລະ ຮິມໄນ,
ແລະ ພີ່ນ້ອງຂອງພວກເຂົາ ມີຄວາມປິຕິ
ຍິນດີຢ່າງຍິ່ງ ເພາະຄວາມສຳເລັດທີ່ພວກ
ເຂົາມີໃນບັນດາຊາວເລມັນ ໂດຍເຫັນວ່າ
ພຣະຜູ້ເປັນເຈົ້າໄດ້ປະທານໃຫ້ພວກເຂົາ
ຕາມ [ກ]ຄຳອະທິຖານຂອງພວກເຂົາ ແລະ
ວ່າພຣະອົງໄດ້ເຮັດໃຫ້ພຣະຄຳຂອງພຣະ
ອົງ ປະກົດເປັນຈິງແກ່ພວກເຂົາຢ່າງຄົບ
ຖ້ວນແລ້ວ.

## ບົດທີ 26

*ອຳໂມນພາກພູມໃຈໃນພຣະຜູ້ເປັນເຈົ້າ—ສັດທາໄດ້ເຂັ້ມແຂງຂຶ້ນໂດຍພຣະຜູ້ເປັນເຈົ້າ ແລະ ໄດ້ຮັບຄວາມຮູ້—ໂດຍສັດທາມະນຸດຈະຊ່ວຍນຳເອົາຈິດວິນຍານຫລາຍພັນດວງມາສູ່ການກັບໃຈ—ພຣະເຈົ້າມີອຳນາດ ແລະ ເຂົ້າໃຈທຸກສິ່ງທຸກຢ່າງ. ປະມານ 90–77 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ນີ້ຄືຄຳເວົ້າຂອງອຳໂມນທີ່
ລາວໄດ້ເວົ້າກັບພີ່ນ້ອງຂອງລາວ, ມີຄວາມ
ວ່າດັ່ງນີ້: ພີ່ນ້ອງ ແລະ ໝູ່ເພື່ອນຂອງຂ້າ
ພະເຈົ້າ, ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ພວກເຮົາມີເຫດຜົນທີ່ຈະມີຄວາມ
ປິຕິຍິນດີຫລາຍຂະໜາດໃດ; ເພາະພວກ
ເຮົາຄິດໄດ້ບໍວ່າ ເວລາພວກເຮົາ [ກ]ໄດ້ອອກ
ຈາກແຜ່ນດິນເຊຣາເຮັມລາມາ ພຣະເຈົ້າ
ຈະປະທານພອນອັນຍິ່ງໃຫຍ່ແບບນີ້ໃຫ້
ແກ່ພວກເຮົາ?
2 ແລະ ບັດນີ້, ຂ້າພະເຈົ້າຖາມວ່າ, ພອນ
ອັນຍິ່ງໃຫຍ່ອັນໃດທີ່ພຣະອົງໄດ້ປະທານ
ໃຫ້ແກ່ພວກເຮົາ? ພວກທ່ານບອກໄດ້ບໍ່?
3 ຈົ່ງເບິ່ງ, ຂ້າພະເຈົ້າຈະຕອບແທນ
ພວກທ່ານ, ເພາະວ່າຊາວເລມັນ ຜູ້ເປັນ
ພີ່ນ້ອງຂອງພວກເຮົາໄດ້ຢູ່ໃນຄວາມມືດ,
ແທ້ຈິງແລ້ວ, ແມ່ນຢູ່ໃນເຫວເລິກທີ່ມືດທີ່
ສຸດ, ແຕ່ຈົ່ງເບິ່ງ, ມີ [ກ]ຫລາຍຄົນປານໃດໃນ
ພວກເຂົາທີ່ຖືກນຳມາໃຫ້ເຫັນຄວາມແຈ້ງ

15 *ກ* ຢຄ 4:5; ຈຣ 1:11.
ຄມພ ກົດຂອງໂມເຊ.
*ຂ* ມຊຢ 3:14–15; 16:14.
*ຄ* ມຊຢ 13:29–32.
16 *ກ* ມຊຢ 12:31–37;
13:27–33.
*ຂ* 2 ນຟ 11:4.
*ຄ* 1 ທສນ 5:8–9.
17 *ກ* ແອວ 17:9.
**26** 1 *ກ* ມຊຢ 28:9;
ແອວ 17:6–11.
3 *ກ* ແອວ 23:8–13.

ອັນໜ້າອັດສະຈັນຂອງພຣະເຈົ້າ! ແລະ ນີ້ຄືພອນຊຶ່ງພຣະອົງໄດ້ປະທານໃຫ້ແກ່ພວກເຮົາ, ຊຶ່ງເຮັດໃຫ້ພວກເຮົາເປັນ [ຂ]ເຄື່ອງມືໃນພຣະຫັດຂອງພຣະເຈົ້າ ເພື່ອນຳເອົາຜົນງານອັນຍິ່ງໃຫຍ່ນີ້ມາ.

4 ຈົ່ງ ເບິ່ງ ພວກ ເຂົາ ເປັນ [ກ]ພັນໆ ຄົນ ມີຄວາມປິຕິຍິນດີ ແລະ ຖືກນຳມາເຂົ້າຝູງຂອງພຣະເຈົ້າ.

5 ຈົ່ງເບິ່ງ, ເຂົ້າຢູ່ໃນ [ກ]ທົ່ງສຸກແລ້ວ ແລະ ພວກທ່ານເປັນສຸກແລ້ວ, ເພາະພວກທ່ານໄດ້ອອກແຮງງານດ້ວຍ [ຂ]ກ່ຽວ ແລະ ໄດ້ເກັບກ່ຽວດ້ວຍສຸດກຳລັງຂອງພວກທ່ານ, ແທ້ຈິງແລ້ວ, ພວກທ່ານໄດ້ອອກແຮງງານຕະຫລອດທັງວັນ; ແລະ ຈົ່ງເບິ່ງ, ຈຳນວນ [ຄ]ມັດເຂົ້າຂອງພວກທ່ານ! ແລະ ມັນຈະຖືກເກັບໄວ້ໃນສາງເພື່ອມັນຈະບໍ່ເສຍຫາຍໄປ.

6 ແທ້ຈິງແລ້ວ, ມັນຈະບໍ່ຖືກລົມພະຍຸພັດໄປໃນວັນສຸດທ້າຍ; ແທ້ຈິງແລ້ວ, ມັນກໍຈະບໍ່ຖືກລົມບ້າໝູພັດຫອບໄປ, ແຕ່ເມື່ອ [ກ]ລົມພະຍຸມາ ມັນຈະຖືກຮວບຮວມຕົວໄວ້ນຳກັນຢູ່ໃນບ່ອນຂອງມັນ, ເພື່ອລົມພະຍຸຈະເຂົ້າເຖິງມັນບໍ່ໄດ້; ແທ້ຈິງແລ້ວ, ມັນຈະບໍ່ຖືກພະຍຸຮ້າຍພັດໄປບ່ອນໃດທີ່ສັດຕູຕ້ອງການຈະພາມັນໄປ.

7 ແຕ່ຈົ່ງເບິ່ງ, ມັນຢູ່ໃນພຣະຫັດຂອງພຣະຜູ້ເປັນເຈົ້າ ແລະ ໃນ [ກ]ລະດູຂອງການເກັບກ່ຽວ, ແລະ ມັນເປັນຂອງພຣະອົງ; ແລະ ພຣະອົງຈະ [ຂ]ຍົກມັນຂຶ້ນໃນວັນສຸດທ້າຍ.

8 ຂໍພຣະນາມຂອງພຣະເຈົ້າຂອງພວກເຮົາຈົ່ງພຣະກະເສີມສຳລານເຖີດ, ຈົ່ງຂໍໃຫ້ພວກເຮົາ [ກ]ຮ້ອງເພງສັນລະເສີນພຣະອົງເຖີດ, ແທ້ຈິງແລ້ວ, ຂໍໃຫ້ພວກເຮົາຖວາຍ [ຂ]ຄວາມຂອບພຣະໄທແດ່ພຣະນາມອັນສັກສິດຂອງພຣະອົງເຖີດ, ເພາະວ່າພຣະອົງໄດ້ເຮັດວຽກງານອັນຊອບທຳຕະຫລອດການ.

9 ຖ້າຫາກ ພວກເຮົາບໍ່ໄດ້ຈາກແຜ່ນດິນເຊຣາເຮັມລາແລ້ວ, ພີ່ນ້ອງທີ່ຮັກຂອງພວກເຮົາເຫລົ່ານີ້ ຜູ້ຊຶ່ງຮັກພວກເຮົາທີ່ສຸດ ຈະຍັງຄົງທໍລະມານຢູ່ດ້ວຍ [ກ]ຄວາມກຽດຊັງພວກເຮົາ, ແທ້ຈິງແລ້ວ, ພວກເຂົາຈະເປັນຄົນແປກໜ້າຕໍ່ພຣະເຈົ້າ.

10 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອອຳໂມນກ່າວຂໍ້ຄວາມນີ້ແລ້ວ, ອາໂຣນນ້ອງຊາຍຂອງລາວກໍຕິຕຽນລາວ, ໂດຍເວົ້າວ່າ: ອຳໂມນ, ຂ້ອຍຢ້ານວ່າຄວາມປິຕິຍິນດີຂອງເຈົ້າໄດ້ພາໃຫ້ເຈົ້າໄປຫາການອວດອ້າງເສຍແລ້ວ.

11 ແຕ່ ອຳໂມນ ໄດ້ ເວົ້າ ກັບ ລາວ ວ່າ: ຂ້ອຍບໍ່ໄດ້ [ກ]ອວດອ້າງໃນພະລັງຂອງຕົນເອງ ຫລື ໃນປັນຍາຂອງຕົນເອງ; ແຕ່ຈົ່ງເບິ່ງ, [ຂ]ຄວາມສຸກຂອງຂ້ອຍເຕັມປ່ຽມ, ແທ້ຈິງແລ້ວ, ໃຈຂອງຂ້ອຍເຕັມໄປດ້ວຍຄວາມສຸກ, ແລະ ຂ້ອຍຈະປິຕິຍິນດີໃນພຣະເຈົ້າຂອງຂ້ອຍ.

12 ແທ້ຈິງແລ້ວ, ຂ້ອຍຮູ້ວ່າ ຂ້ອຍບໍ່ມີຄ່າອັນໃດເລີຍ; ຖ້າອາໄສພະລັງຂອງຂ້ອຍເອງ ຂ້ອຍກໍອ່ອນແອ; ສະນັ້ນ ຂ້ອຍຈະບໍ່ [ກ]ອວດອ້າງເຖິງເລື່ອງຕົວເອງ, ແຕ່ຂ້ອຍຈະ

3 ຂ 2 ກຣທ 4:5; ມຊຢ 23:10.
4 ກ ແອວ 23:5.
5 ກ ຢຮ 4:35–37; ຄພ 4:4.
ຂ ຢອ 3:13.
ຄ ຄພ 33:7–11; 75:2, 5.
6 ກ ຣລມ 5:12; 3 ນຟ 14:24–27.
7 ກ ຄນພ ເກັບກ່ຽວ.
ຂ ມຊຢ 23:22; ແອວ 36:28.
8 ກ ຄພ 25:12.
ຂ ຄນພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
9 ກ ມຊຢ 28:1–2.
11 ກ 2 ກຣທ 7:14.
ຂ ຄພ 18:14–16. ຄນພ ຊື່ນຊົມ, ຄວາມຊື່ນຊົມ.
12 ກ ຢມຢ 9:24; ແອວ 29:9.

ອວດ ອ້າງ ພຣະ ເຈົ້າຂອງ ຂ້ອຍ, ເພາະ ໃນ [ຂ]ພະລັງຂອງພຣະອົງ; ຂ້ອຍສາມາດເຮັດໄດ້ທຸກສິ່ງທຸກຢ່າງ; ແທ້ຈິງແລ້ວ, ຈົ່ງເບິ່ງ, ພວກເຮົາໄດ້ກະທຳສິ່ງມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງມາແລ້ວໃນແຜ່ນດິນນີ້, ຊຶ່ງພວກເຮົາຈະສັນລະເສີນພຣະນາມຂອງພຣະອົງຕະຫລອດການ.

13 ຈົ່ງເບິ່ງ, ພີ່ນ້ອງຂອງພວກເຮົາມີຈັກພັນຄົນແລ້ວທີ່ພຣະອົງໄດ້ປົດປ່ອຍອອກຈາກຄວາມເຈັບປວດແຫ່ງ [ກ]ນະລົກ ແລະ ນຳມາ [ຂ]ຮ້ອງສັນລະເສີນຕໍ່ຄວາມຮັກທີ່ໄຖ່, ແລະ ນີ້ເປັນເພາະອຳນາດຂອງພຣະຄຳຂອງພຣະອົງ ຊຶ່ງຢູ່ກັບພວກເຮົາ, ສະນັ້ນ ພວກເຮົາບໍ່ມີເຫດຜົນອັນຍິ່ງໃຫຍ່ທີ່ຈະປິຕິຍິນດີບໍ?

14 ແທ້ຈິງແລ້ວ, ພວກເຮົາມີເຫດຜົນທີ່ຈະສັນລະເສີນພຣະອົງຕະຫລອດໄປ, ເພາະພຣະອົງເປັນພຣະເຈົ້າສູງສຸດ, ແລະ ໄດ້ປົດປ່ອຍພີ່ນ້ອງຂອງພວກເຮົາອອກຈາກ [ກ]ໂສ້ແຫ່ງນະລົກ.

15 ແທ້ຈິງແລ້ວ, ພວກເຂົາຖືກປິດລ້ອມດ້ວຍຄວາມພິນາດ ແລະ ຄວາມມືດອັນເປັນນິດ; ແຕ່ຈົ່ງເບິ່ງ, ພຣະອົງໄດ້ນຳເອົາພວກເຂົາມາຫາ [ກ]ຄວາມສະຫວ່າງອັນເປັນນິດຂອງພຣະອົງ, ແທ້ຈິງແລ້ວ, ມາຫາຄວາມລອດອັນເປັນນິດ; ແລະ ພວກເຂົາຖືກປິດລ້ອມດ້ວຍຄວາມຮັກອັນລົ້ນເຫລືອຂອງພຣະອົງ ອັນຫາທີ່ປຽບບໍ່ໄດ້; ແທ້ຈິງແລ້ວ, ແລະ ພວກເຮົາໄດ້ເປັນເຄື່ອງມືໃນພຣະຫັດຂອງພຣະອົງໃນການເຮັດສິ່ງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນນີ້.

16 ສະນັ້ນ, ຂໍໃຫ້ພວກເຮົາຈົ່ງ [ກ]ປາບປື້ມເຖີດ, ແທ້ຈິງແລ້ວ, ພວກເຮົາຈະ [ຂ]ປາບປື້ມໃນພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ພວກເຮົາຈະປິຕິຍິນດີ ເພາະວ່າຄວາມຜາສຸກຂອງພວກເຮົາເຕັມປ່ຽມ; ແທ້ຈິງແລ້ວ, ພວກເຮົາຈະສັນລະເສີນພຣະເຈົ້າຂອງພວກເຮົາຕະຫລອດໄປ. ຈົ່ງເບິ່ງ, ຜູ້ໃດຈະປາບປື້ມໃນພຣະຜູ້ເປັນເຈົ້າໄດ້ຫລາຍເກີນໄປ? ແທ້ຈິງແລ້ວ, ຜູ້ໃດຈະໄດ້ເວົ້າຫລາຍເກີນໄປເຖິງອຳນາດອັນຍິ່ງໃຫຍ່ຂອງພຣະອົງ, ແລະ ເຖິງ [ຄ]ຄວາມເມດຕາ, ແລະ ເຖິງຄວາມອົດກັ້ນຂອງພຣະອົງທີ່ມີຕໍ່ລູກຫລານມະນຸດທັງປວງ? ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ ຂ້າພະເຈົ້າບໍ່ສາມາດເວົ້າແມ່ນແຕ່ສ່ວນໜ້ອຍໜຶ່ງຂອງຄວາມຮູ້ສຶກຂອງຂ້າພະເຈົ້າ.

17 ແລະ ຜູ້ໃດຈະຄິດວ່າພຣະເຈົ້າຂອງພວກເຮົາຈະເມດຕາປານີຫລາຍປານນີ້ ເຖິງກັບວ່າພຣະອົງຍາດເອົາພວກເຮົາອອກຈາກສະພາບອັນເປັນຕາຢ້ານ ແລະ ເຕັມໄປດ້ວຍບາບ ແລະ ຄວາມເປິເປື້ອນຂອງພວກເຮົາ?

18 ຈົ່ງເບິ່ງ, ພວກເຮົາໄດ້ອອກໄປໃນຄວາມໂມໂຫ, ດ້ວຍການຄຸກຄາມຢ່າງໜັກທີ່ຈະ [ກ]ທຳລາຍສາດສະໜາຈັກຂອງພຣະອົງ.

19 ໂອ້ ແລ້ວເປັນຫຍັງພຣະອົງຈຶ່ງບໍ່ສົ່ງພວກເຮົາໄປສູ່ຄວາມພິນາດອັນເປັນຕາຢ້ານນັ້ນ, ແທ້ຈິງແລ້ວ, ເປັນຫຍັງພຣະອົງຈຶ່ງບໍ່ປ່ອຍດາບແຫ່ງຄວາມຍຸດຕິທຳຂອງພຣະອົງຕົກລົງມາໃສ່ພວກເຮົາ, ແລະ ກຳ

12 ຂ ພສສ 18:32–40; ຟລປ 4:13; 1 ນຟ 17:3.
13 ກ ຄມພ ນະລົກ.
ຂ ແອວ 5:26.
14 ກ ແອວ 12:11.
15 ກ ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
16 ກ ຣມ 15:17; 1 ກຣທ 1:31.
ຂ 2 ກຣທ 10:15–18; ຄພ 76:61.
ຄ ພສສ 36:5–6.
18 ກ ມຊຢ 27:8–10.

ນິດໃຫ້ພວກເຮົາໄປຫາຄວາມໝົດຫວັງຊົ່ວ
ນິລັນດອນ?
20 ໂອ້ ຈິດວິນຍານຂອງຂ້າພະເຈົ້າເອີຍ,
ເກືອບຄືກັບວ່າ ມັນຈະໜີໄປເມື່ອຄິດໄປ
ແລ້ວ. ຈົ່ງເບິ່ງ, ພຣະອົງບໍ່ໄດ້ໃຊ້ຄວາມຍຸດ
ຕິທຳຂອງພຣະອົງກັບພວກເຮົາ, ແຕ່ໃນ
ພຣະເມດຕາປານີອັນຍິ່ງໃຫຍ່ຂອງພຣະ
ອົງ, ພຣະອົງໄດ້ນຳພາພວກເຮົາອອກຈາກ
[ກ]ເຫວເລິກແຫ່ງຄວາມຕາຍ, ແລະ ຄວາມ
ທຸກທໍລະມານອັນເປັນນິດ, ຈົນກະທັ້ງມາ
ສູ່ຄວາມລອດຂອງຈິດວິນຍານຂອງພວກ
ເຮົາ.
21 ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງຂອງຂ້າ
ພະເຈົ້າ, ມີ [ກ]ມະນຸດທີ່ມີຈິດໃຈທຳມະດາຜູ້
ໃດທີ່ຈະຮູ້ຈັກເລື່ອງເຫລົ່ານີ້? ຂ້າພະເຈົ້າ
ກ່າວກັບພວກເຈົ້າວ່າ, ບໍ່ມີເລີຍ, ບໍ່ມີຜູ້ໃດ
ທີ່ຈະ [ຂ]ຮູ້ຈັກເລື່ອງເຫລົ່ານີ້, ນອກຈາກຄົນ
ທີ່ສຳນຶກຜິດແລ້ວ.
22 ແທ້ ຈິງ ແລ້ວ, ຜູ້ ທີ່ [ກ]ກັບ ໃຈ ແລະ
ສະແດງ [ຂ]ສັດທາ, ແລະ ນຳເອົາວຽກງານ
ດີອອກມາ, ແລະ ອະທິຖານສະໝ່ຳສະເໝີ
ຢ່າງບໍ່ທໍ້ຖອຍ—ແລ້ວພຣະເຈົ້າຈະເຮັດໃຫ້
ຄົນເຊັ່ນນັ້ນຮູ້ເຖິງ [ຄ]ຄວາມລຶກລັບຂອງພຣະ
ເຈົ້າ; ແທ້ຈິງແລ້ວ, ພຣະອົງຈະມອບການ
ເປີດເຜີຍເຖິງສິ່ງທີ່ບໍ່ເຄີຍເປີດເຜີຍມາກ່ອນ
ໃຫ້ແກ່ຄົນແບບນັ້ນ; ແທ້ຈິງແລ້ວ, ພຣະອົງ
ຈະປະທານໃຫ້ແກ່ຄົນແບບນັ້ນ ເພື່ອຈະໄດ້
ນຳພາຄົນເປັນຈຳນວນພັນໆມາສູ່ການກັບ
ໃຈ, ເໝືອນດັ່ງພຣະອົງເຄີຍໄດ້ປະທານໃຫ້
ແກ່ພວກເຮົາມາແລ້ວ ເພື່ອນຳພາພີ່ນ້ອງ
ເຫລົ່ານີ້ຂອງພວກເຮົາມາສູ່ການກັບໃຈ.
23 ບັດນີ້ພີ່ນ້ອງຂອງຂ້າພະເຈົ້າເອີຍ,
ພວກທ່ານຈື່ໄດ້ບໍວ່າ ພວກເຮົາໄດ້ເວົ້າກັບ
ພີ່ນ້ອງຂອງພວກເຮົາຜູ້ທີ່ອາໄສຢູ່ໃນແຜ່ນ
ດິນເຊຣາເຮັມລາວ່າ, ພວກເຮົາຈະຂຶ້ນໄປ
ຫາແຜ່ນດິນນີໄຟ ເພື່ອສັ່ງສອນຊາວເລມັນ
ຜູ້ເປັນພີ່ນ້ອງຂອງພວກເຮົາແລ້ວ ພວກ
ເຂົາກໍຫົວເຍາະເຍີ້ຍພວກເຮົາ?
24 ພວກເຂົາໄດ້ເວົ້າກັບພວກເຮົາວ່າ:
ພວກເຈົ້າຄິດບໍວ່າ ພວກເຈົ້າຈະນຳເອົາ
ຊາວເລມັນມາຫາຄວາມຮູ້ເລື່ອງຄວາມຈິງ
ໄດ້? ພວກເຈົ້າຄິດບໍວ່າພວກເຈົ້າຈະເຮັດ
ໃຫ້ຊາວເລມັນສຳນຶກເຖິງຄວາມບໍ່ຖືກຕ້ອງ
ຂອງ [ກ]ຮີດຄອງປະເພນີຂອງບັນພະບຸລຸດ
ຂອງພວກເຂົາໄດ້ ເພາະວ່າພວກເຂົາເປັນ
ຄົນ [ຂ]ແຂງຄໍ; ຊຶ່ງໃຈຂອງພວກເຂົາຊື່ນຊົມ
ໃນການນອງເລືອດ; ຊຶ່ງເວລາຂອງພວກ
ເຂົາຖືກໃຊ້ມົ້ວສຸມຢູ່ກັບຄວາມຊົ່ວຮ້າຍທີ່
ສຸດ; ຊຶ່ງທາງຂອງພວກເຂົາເປັນທາງຂອງ
ຄົນລ່ວງລະເມີດມາຕັ້ງແຕ່ຕົ້ນ? ບັດນີ້ພີ່
ນ້ອງຂອງຂ້າພະເຈົ້າ, ພວກທ່ານຈົ່ງຈື່ຈຳ
ໄວ້ວ່າ ນີ້ຄືຄຳເວົ້າຂອງພວກເຂົາ.
25 ແລະ ຍິ່ງໄປກວ່ານັ້ນ ພວກເຂົາໄດ້
ເວົ້າວ່າ: ໃຫ້ພວກເຮົາຈັບອາວຸດຂຶ້ນສູ້ຮົບ
ກັບພວກເຂົາເທາະ, ເພື່ອພວກເຮົາຈະໄດ້
ທຳລາຍພວກເຂົາ ແລະ ທຳລາຍຄວາມຊົ່ວ
ຮ້າຍຂອງພວກເຂົາອອກໄປຈາກແຜ່ນດິນ
ນີ້, ຖ້າບໍ່ດັ່ງນັ້ນ ພວກເຂົາຈະມາຢຽບຍ່ຳ
ແລະ ທຳລາຍພວກເຮົາ.
26 ແຕ່ ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າເອີຍ, ພວກເຮົາໄດ້ເຂົ້າມາໃນ
ຖິ່ນແຫ້ງແລ້ງກັນດານ ບໍ່ແມ່ນມີເຈດຕະນາ
ທີ່ຈະທຳລາຍພີ່ນ້ອງຂອງພວກເຮົາ, ແຕ່ມີ
ເຈດຕະນາວ່າ ບາງທີພວກເຮົາອາດຈະໄດ້

20 *ກ* 2 ນຟ 1:13; ຣອມ 3:29–30.
21 *ກ* ຄມພ ມະນຸດທີ່ມີຈິດໃຈທຳມະດາ.
*ຂ* 1 ກຣທ 2:9–16; ຢຄ 4:8.
22 *ກ* ແອວ 36:4–5. ຄມພ ກັບໃຈ, ການກັບໃຈ.
*ຂ* ຄມພ ສັດທາ.
*ຄ* ຄມພ ຄວາມລຶກລັບຂອງພຣະເຈົ້າ.
24 *ກ* ມຊຍ 10:11–17.
*ຂ* ມຊຍ 13:29.

ຊ່ວຍເຫລືອຄົນບາງຄົນໃຫ້ລອດພົ້ນ.
27 ບັດນີ້ເມື່ອໃຈຂອງພວກເຮົາທໍ້ຖອຍ
ແລະ ພວກເຮົາເກືອບຈະກັບຄືນໄປ, ຈົ່ງ
ເບິ່ງ, ພຣະຜູ້ເປັນເຈົ້າ ໄດ້ [ກ]ປອບໃຈພວກ
ເຮົາ, ແລະ ກ່າວວ່າ: ຈົ່ງອອກໄປໃນບັນ
ດາຊາວເລມັນ, ພີ່ນ້ອງຂອງພວກເຈົ້າ, ຈົ່ງ
ຮັບເອົາ [ຂ]ຄວາມທຸກຂອງພວກເຈົ້າດ້ວຍ
[ຄ]ຄວາມອົດທົນ, ແລະ ເຮົາຈະມອບຄວາມ
ສຳເລັດໃຫ້ແກ່ພວກເຈົ້າ.
28 ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາໄດ້ມາ
ແລະ ອອກໄປຢູ່ໃນບັນດາພວກເຂົາ ແລະ
ພວກເຮົາໄດ້ອົດທົນໃນຄວາມທຸກທໍລະ
ມານຂອງພວກເຮົາ, ແລະ ພວກເຮົາໄດ້
ອົດທົນຕໍ່ຄວາມຂາດແຄນທຸກຢ່າງ; ແທ້ຈິງ
ແລ້ວ, ພວກເຮົາເດີນທາງໄປຫາເຮືອນນີ້
ເຮືອນນັ້ນ, ໄວ້ວາງໃຈຕາມຄວາມເມດຕາ
ປານີຂອງໂລກ—ບໍ່ພຽງແຕ່ຄວາມເມດຕາ
ປານີຂອງໂລກເທົ່ານັ້ນ ແຕ່ໃນພຣະເມດ
ຕາປານີຂອງພຣະເຈົ້ານຳອີກ.
29 ແລະ ພວກເຮົາໄດ້ເຂົ້າໄປໃນເຮືອນ
ຂອງພວກເຂົາ ແລະ ໄດ້ສິດສອນພວກ
ເຂົາ, ແລະ ພວກເຮົາໄດ້ສິດສອນພວກເຂົາ
ຕາມຖະໜົນຫົນທາງ; ແທ້ຈິງແລ້ວ, ພວກ
ເຮົາໄດ້ສິດສອນພວກເຂົາຢູ່ເທິງເນີນພູ
ແລະ ໄດ້ເຂົ້າໄປໃນພຣະວິຫານ ແລະ ທຳ
ມະສາລາເພື່ອສິດສອນພວກເຂົາ; ແລະ
ພວກເຮົາໄດ້ຖືກຂັບໄລ່ໜີ ແລະ ໄດ້ຖືກ
ເຍາະເຍີ້ຍຫົວຂວັນ, ແລະ ໄດ້ຖືກຖົ່ມນ້ຳ
ລາຍໃສ່, ແລະ ໄດ້ຖືກຕົບໜ້າ, ແລະ ໄດ້
ຖືກແກວ່ງກ້ອນຫີນໃສ່, ແລະ ໄດ້ຖືກຈັບ,
ແລະ ໄດ້ຖືກມັດດ້ວຍເຊືອກໝັ້ນ, ແລະ ໄດ້
ຖືກເອົາໄປເຂົ້າຄຸກ, ແຕ່ໂດຍອຳນາດ ແລະ
ຄວາມສະຫລຽວສະຫລາດຂອງພຣະເຈົ້າ
ພວກເຮົາຈຶ່ງໄດ້ຮັບການປົດປ່ອຍ.
30 ພວກເຮົາໄດ້ຮັບຄວາມທຸກນາໆປະ
ການ, ແລະ ທັງໝົດນີ້ເພື່ອບາງທີພວກເຮົາ
ອາດຈະໄດ້ເປັນທົນທາງຊ່ວຍເຫລືອຈິດ
ວິນຍານດວງໜຶ່ງໃຫ້ລອດ; ແລະ ພວກເຮົາ
ຄິດວ່າພວກເຮົາຈະເຕັມໄປດ້ວຍ [ກ]ຄວາມ
ສຸກ ຖ້າຫາກພວກເຮົາສາມາດເປັນທົນ
ທາງຊ່ວຍເຫລືອຜູ້ໃດຜູ້ໜຶ່ງໃຫ້ລອດໄດ້.
31 ບັດນີ້ ຈົ່ງເບິ່ງ, ພວກເຮົາສາມາດ
ເບິ່ງໄປ ແລະ ເຫັນຜົນຂອງວຽກງານຂອງ
ພວກເຮົາໄດ້; ແລະ ມັນມີໜ້ອຍບໍ່? ຂ້າ
ພະເຈົ້າກ່າວກັບພວກທ່ານວ່າ ບໍ່ເລີຍ, ມັນ
ມີ [ກ]ຫລາຍ; ແທ້ຈິງແລ້ວ, ແລະ ພວກເຮົາ
ສາມາດເປັນພະຍານໄດ້ເຖິງຄວາມຈິງໃຈ
ຂອງພວກເຂົາ, ຍ້ອນວ່າຄວາມຮັກຂອງ
ພວກເຂົາທີ່ມີຕໍ່ພີ່ນ້ອງຂອງພວກເຂົາ ແລະ
ຄວາມຮັກທີ່ມີຕໍ່ພວກເຮົານຳອີກ.
32 ເພາະຈົ່ງເບິ່ງ, ພວກເຂົາຍອມ [ກ]ເສຍ
ສະລະຊີວິດຕົວເອງ ແທນທີ່ຈະເອົາຊີວິດ
ຂອງສັດຕູຂອງພວກເຂົາ; ແລະ ພວກເຂົາ
ໄດ້ [ຂ]ຝັງອາວຸດແຫ່ງສົງຄາມຂອງພວກເຂົາ
ໄວ້ເລິກໃນດິນ, ຍ້ອນວ່າພວກເຂົາມີຄວາມ
ຮັກຕໍ່ພີ່ນ້ອງຂອງພວກເຂົາ.
33 ແລະ ບັດນີ້ຈົ່ງເບິ່ງ ຂ້າພະເຈົ້າເວົ້າ
ກັບພວກທ່ານວ່າ ມັນເຄີຍມີຄວາມຮັກອັນ
ຍິ່ງໃຫຍ່ແບບນີ້ຢູ່ໃນແຜ່ນດິນທົ່ວໄປບໍ? ຈົ່ງ
ເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ບໍ່
ມີເລີຍ, ທັງໆທີ່ຢູ່ໃນບັນດາຊາວນີໄຟ ກໍບໍ່
ເຄີຍມີເລີຍ.
34 ເພາະຈົ່ງເບິ່ງ, ຊາວນີໄຟຈະຈັບອາ
ວຸດຂຶ້ນຕໍ່ສູ້ພີ່ນ້ອງຂອງພວກເຂົາ; ພວກ

27 *ກ* ແອວ 17:9–11.
*ຂ* ແອວ 20:29–30.
ຄມພ ຍາກລຳບາກ,
ຄວາມຍາກລຳບາກ.
*ຄ* ຄມພ ອົດທົນ,
ຄວາມອົດທົນ.
30 *ກ* ຄພ 18:15–16.
31 *ກ* ແອວ 23:8–13.
32 *ກ* ແອວ 24:20–24.
*ຂ* ແອວ 24:15.

ເຂົາ ຈະ ບໍ່ ຍອມ ໃຫ້ ຕົນ ເອງ ຖືກ ຂ້າ ຕາຍ ເລີຍ. ແຕ່ຈົ່ງເບິ່ງ, ມີຫລາຍຄົນໃນພວກນີ້ທີ່ຍອມສະລະຊີວິດຂອງຕົນ ແລະ ພວກເຮົາຮູ້ວ່າ ພວກເຂົາໄປເຝົ້າພຣະເຈົ້າຂອງພວກເຂົາແລ້ວ, ເພາະຄວາມຮັກຂອງພວກເຂົາ ແລະ ຄວາມກຽດຊັງບາບຂອງພວກເຂົາ.

35 ບັດນີ້ພວກເຮົາມີເຫດຜົນທີ່ຈະປິຕິຍິນດີບໍ? ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ນັບແຕ່ການເລີ່ມຕົ້ນຂອງໂລກ ບໍ່ເຄີຍມີຜູ້ໃດຈະມີເຫດຜົນຫລາຍແບບນີ້ທີ່ຈະປິຕິຍິນດີຄືກັນກັບພວກເຮົາ; ແທ້ຈິງແລ້ວ, ຄວາມຜາສຸກຂອງຂ້າພະເຈົ້າຖືກພາໄປຈົນເຖິງການອວດອ້າງພຣະເຈົ້າຂອງຂ້າພະເຈົ້າ; ເພາະພຣະອົງມີ [ກ]ອຳນາດທຸກຢ່າງ, ມີຄວາມສະຫລຽວສະຫລາດທຸກຢ່າງ, ແລະ ມີ [ຂ]ຄວາມເຂົ້າໃຈທຸກຢ່າງ, ແລະ ພຣະອົງເຂົ້າໃຈ ແລະ ມີ [ຄ]ຄວາມເມດຕາຈົນເຖິງຂັ້ນທີ່ມອບຄວາມລອດໃຫ້ແກ່ຜູ້ທີ່ກັບໃຈ ແລະ ເຊື່ອໃນພຣະນາມຂອງພຣະອົງ.

36 ບັດນີ້ຖ້າຫາກສິ່ງນີ້ເປັນການອວດອ້າງແລ້ວ, ຂ້າພະເຈົ້າຈະອວດອ້າງມັນ; ເພາະວ່ານີ້ຄືຊີວິດ ແລະ ຄວາມສະຫວ່າງຂອງຂ້າພະເຈົ້າ, ຄວາມຜາສຸກ ແລະ ຄວາມລອດຂອງຂ້າພະເຈົ້າ, ແລະ ການໄຖ່ຂອງຂ້າພະເຈົ້າອອກຈາກຄວາມຈິບຫາຍອັນເປັນນິດ. ແທ້ຈິງແລ້ວ, ຂໍພຣະນາມຂອງພຣະເຈົ້າຂອງຂ້າພະເຈົ້າ ຈົ່ງພຣະກະເສີມສຳລານເຖີດ, ພຣະຜູ້ທີ່ເປັນຫ່ວງຜູ້ຄົນພວກນີ້, ຜູ້ທີ່ເປັນ [ກ]ກິ່ງງ່າຂອງຕົ້ນອິດສະຣາເອນ, ຊຶ່ງຫລົງຈາກຕົ້ນຂອງມັນເຂົ້າໄປໃນແຜ່ນດິນໃໝ່; ແທ້ຈິງແລ້ວ, ຂ້າພະເຈົ້າເວົ້າວ່າ, ຂໍພຣະນາມຂອງພຣະເຈົ້າຈົ່ງພຣະກະເສີມສຳລານເຖີດ, ພຣະອົງເປັນຫ່ວງພວກເຮົາ, [ຂ]ຄົນທີ່ຊັດເຊພະເນຈອນໄປໃນແຜ່ນດິນໃໝ່.

37 ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ ພວກເຮົາເຫັນວ່າ ພຣະເຈົ້າເປັນຫ່ວງນຳ [ກ]ທຸກຄົນ ບໍ່ວ່າພວກເຂົາຈະຢູ່ໃນແຜ່ນດິນໃດກໍຕາມ; ແທ້ຈິງແລ້ວ, ພຣະອົງນັບຜູ້ຄົນຂອງພຣະອົງ ແລະ ອຸທອນກ້ອນເລືອດແຫ່ງພຣະເມດຕາປານີຂອງພຣະອົງທີ່ມີຢູ່ເທິງແຜ່ນດິນໂລກທັງໝົດ. ບັດນີ້ ນີ້ຄືຄວາມຜາສຸກຂອງຂ້າພະເຈົ້າ, ແລະ ການຖວາຍຂອບພຣະໄທອັນລົ້ນເຫລືອຂອງຂ້າພະເຈົ້າ; ແທ້ຈິງແລ້ວ, ແລະ ຂ້າພະເຈົ້າຈະຖວາຍການຂອບພຣະໄທແດ່ພຣະເຈົ້າຂອງຂ້າພະເຈົ້າຕະຫລອດໄປ. ອາແມນ.

## ບົດທີ 27

*ພຣະຜູ້ເປັນເຈົ້າບັນຊາໃຫ້ອຳໂມນນຳພາຜູ້ຄົນຂອງອານໄທ-ນີໄຟ-ລີໄຮ ໄປຫາບ່ອນປອດໄພ—ອຳໂມນມີຄວາມປິຕິຍິນດີຫລາຍເມື່ອໄດ້ພົບກັບແອວມາຈົນວ່າຮ່າງກາຍຂອງລາວໝົດແຮງ—ຊາວນີໄຟໄດ້ມອບແຜ່ນດິນເຈີຊອນໃຫ້ພວກເຂົາ—ພວກເຂົາຖືກເອີ້ນວ່າຜູ້ຄົນຂອງອຳໂມນ. ປະມານ 90–77 ປີກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອຊາວເລມັນຊຶ່ງໄດ້ໄປກໍ່ສົງຄາມກັບຊາວນີໄຟ ໄດ້ດີ້ນລົນມາຫລາຍເທື່ອແລ້ວທີ່ຈະທຳລາຍຊາວນີໄຟ, ຈຶ່ງເຫັນວ່າມັນບໍ່ມີປະໂຫຍດທີ່ຈະພະຍາຍາມທຳລາຍຊຶ່ງກັນແລະກັນ, ພວກເຂົາຈຶ່ງໄດ້ກັບຄືນໄປຫາແຜ່ນດິນນີໄຟ.

35 *ກ* ຄມພ ອຳນາດ.
*ຂ* ຄພ 88:41.
*ຄ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
36 *ກ* ປຖກ 49:22–26; ຢຄ 2:25; 5:25.
*ຂ* ຢຄ 7:26.
37 *ກ* ກຈກ 10:34–35; 2 ນຟ 26:33.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ອາມາ ລະໄຄ ມີ ຄວາມ ຄຽດ ແຄ້ນ ຫລາຍ
ທີ່ສຸດເພາະການເສຍໄຊຂອງພວກເຂົາ.
ແລະ ເມື່ອເຫັນວ່າພວກເຂົາຫາທາງແກ້
ແຄ້ນຊາວນີໄຟບໍ່ໄດ້, ພວກເຂົາຈຶ່ງເລີ່ມຍຸ
ຍົງຜູ້ຄົນໃຫ້ຄຽດແຄ້ນໃຫ້ຜູ້ຄົນຂອງ [ກ]ອານ
ໄທ-ນີໄຟ-ລີໄຮ, ທີ່ເປັນ [ຂ]ພີ່ນ້ອງຂອງພວກ
ເຂົາເອງ; ສະນັ້ນ ພວກເຂົາຈຶ່ງເລີ່ມທຳລາຍ
ພວກເຂົາ.
3 ບັດນີ້ຜູ້ຄົນພວກນີ້ບໍ່ຍອມຈັບອາວຸດ
[ກ]ອີກ, ແຕ່ພວກເຂົາຍອມຕົວໃຫ້ຖືກຂ້າ
ຕາຍ ຕາມຄວາມປະສົງຂອງ ສັດ ຕູຂອງ
ພວກເຂົາ.
4 ບັດນີ້ເມື່ອອຳໂມນ ແລະ ພີ່ນ້ອງຂອງ
ລາວ ເຫັນການທຳລາຍ ໃນ ບັນດາຜູ້ຄົນ
ທີ່ລາວຮັກຫລາຍທີ່ສຸດ, ແລະ ໃນບັນດາ
ຜູ້ຄົນທີ່ຮັກເຂົາເຈົ້າ—ເພາະວ່າເຂົາເຈົ້າ
ຖືກນັບຖືວ່າເປັນເຫລົ່າທູດທີ່ໄດ້ຖືກສົ່ງມາ
ຈາກພຣະເຈົ້າເພື່ອຊ່ວຍເຫລືອພວກເຂົາ
ໃຫ້ລອດຈາກຄວາມພິນາດອັນເປັນນິດ—
ສະນັ້ນ, ເມື່ອອຳໂມນ ແລະ ພີ່ນ້ອງຂອງ
ລາວເຫັນການທຳລາຍອັນຍິ່ງໃຫຍ່ນີ້ແລ້ວ,
ເຂົາເຈົ້າກໍເກີດຄວາມເມດຕາສົງສານຂຶ້ນ
ມາ, ແລະ ເຂົາເຈົ້າໄດ້ [ກ]ກ່າວກັບກະສັດວ່າ:
5 ຂໍໃຫ້ພວກຂ້ານ້ອຍຮວບຮວມເອົາຜູ້
ຄົນພວກນີ້ຂອງພຣະຜູ້ເປັນເຈົ້າ, ແລະ ໃຫ້
ພວກເຮົາລົງໄປຫາແຜ່ນດິນເຊຣາເຮັມລາ
ໄປຫາຊາວນີໄຟພີ່ນ້ອງຂອງພວກເຮົາ
ເຖີດ, ແລະ ໜີຈາກກຳມືຂອງສັດຕູຂອງ
ພວກເຮົາເພື່ອພວກເຮົາຈະບໍ່ຖືກທຳລາຍ.
6 ແຕ່ກະສັດໄດ້ເວົ້າກັບເຂົາເຈົ້າວ່າ:
ຈົ່ງເບິ່ງ, ຊາວນີໄຟຈະທຳລາຍພວກເຮົາ,
ເພາະການຄາດຕະກຳ ແລະ ບາບອັນ
ຫລວງຫລາຍທີ່ພວກເຮົາໄດ້ກະທຳຕໍ່ພວກ
ເຂົາ.
7 ແລະ ອຳໂມນເວົ້າວ່າ: ຂ້ານ້ອຍຈະໄປ
ທູນຖາມພຣະຜູ້ເປັນເຈົ້າ, ແລະ ຖ້າຫາກ
ພຣະອົງບອກພວກເຮົາວ່າ ໃຫ້ລົງໄປຫາພີ່
ນ້ອງຂອງພວກເຮົາ, ແລ້ວທ່ານຈະໄປບໍ່?
8 ແລະ ກະສັດໄດ້ກ່າວກັບລາວວ່າ: ແທ້
ຈິງແລ້ວ, ຖ້າຫາກພຣະຜູ້ເປັນເຈົ້າບອກ
ໃຫ້ພວກເຮົາໄປ, ພວກເຮົາຈະລົງໄປຫາ
ພີ່ນ້ອງຂອງພວກເຮົາ, ແລະ ພວກເຮົາຈະ
ເປັນຂ້ອຍຂ້າພວກເຂົາໄປຈົນກວ່າພວກ
ເຮົາຈະໃຊ້ແທນຄືນໃຫ້ພວກເຂົາໃນການ
ຄາດຕະກຳ ແລະ ບາບຢ່າງຫລວງຫລາຍ
ຊຶ່ງພວກເຮົາໄດ້ກະທຳໄວ້ກັບພວກເຂົາ.
9 ແຕ່ອຳໂມນໄດ້ເວົ້າກັບເພິ່ນວ່າ: ມັນ
ເປັນການຜິດກົດໝາຍຂອງພີ່ນ້ອງຂອງ
ພວກເຮົາ, ຊຶ່ງບິດາຂອງຂ້ານ້ອຍໄດ້ສະຖາ
ປະນາຂຶ້ນຄື, ບໍ່ໃຫ້ມີ [ກ]ຂ້ອຍຂ້າໃນບັນດາ
ພວກເຂົາ; ສະນັ້ນ ຈົ່ງໃຫ້ພວກເຮົາລົງໄປ
ແລະ ໄວ້ວາງໃຈໃນຄວາມເມດຕາຂອງພີ່
ນ້ອງຂອງພວກເຮົາເຖີດ.
10 ແຕ່ກະສັດໄດ້ກ່າວກັບລາວວ່າ: ຈົ່ງ
ທູນຖາມພຣະຜູ້ເປັນເຈົ້າກ່ອນ, ແລະ ຖ້າ
ຫາກພຣະອົງບອກໃຫ້ພວກເຮົາໄປ, ພວກ
ເຮົາກໍຈະໄປ; ຖ້າບໍ່ດັ່ງນັ້ນ ພວກເຮົາກໍຈະ
ຕາຍຢູ່ໃນແຜ່ນດິນນີ້.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ອຳໂມນໄດ້ທູນຖາມພຣະຜູ້ເປັນເຈົ້າ, ແລະ
ພຣະຜູ້ເປັນເຈົ້າໄດ້ກ່າວກັບລາວວ່າ:
12 ຈົ່ງພາຜູ້ຄົນພວກນີ້ອອກຈາກແຜ່ນ
ດິນນີ້ໄປ ເພື່ອພວກເຂົາຈະບໍ່ຕາຍ; ເພາະ
ວ່າຊາຕານມີອຳນາດອັນໃຫຍ່ຫລວງທີ່
ເໜືອໃຈຂອງຊາວອາມາລະໄຄ, ຜູ້ຍຸຍົງ

**27** 2*ກ* ແອວ 25:1.
ຄມພ ອານໄທ-ນີໄຟ-ລີໄຮ.
*ຂ* ແອວ 43:11.
3*ກ* ແອວ 24:21–26.
4*ກ* ແອວ 24:5.
9*ກ* ມຊຍ 2:13; 29:32, 38, 40.

ຊາວເລມັນໃຫ້ຄຽດແຄ້ນຕໍ່ພີ່ນ້ອງຂອງຕົນ
ແລະ ໃຫ້ຂ້າພວກເຂົາ; ສະນັ້ນ ພວກເຈົ້າ
ຈົ່ງໜີອອກຈາກແຜ່ນດິນນີ້ໄປ; ແລະ ຜູ້ຄົນ
ພວກນີ້ຈະໄດ້ຮັບພອນ, ເພາະເຮົາຈະຮັກ
ສາພວກເຂົາໄວ້.
13 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ອຳໂມນໄດ້ໄປບອກກະສັດທຸກໆຂໍ້ຄວາມທີ່
ພຣະຜູ້ເປັນເຈົ້າໄດ້ກ່າວກັບລາວ.
14 ແລະ ພວກເຂົາໄດ້ເຕົ້າໂຮມຜູ້ຄົນ
ຂອງພວກເຂົາທັງໝົດເຂົ້າກັນ, ແທ້ຈິງ
ແລ້ວ, ແມ່ນຜູ້ຄົນທັງໝົດຂອງພຣະຜູ້ເປັນ
ເຈົ້າ, ແລະ ໄດ້ເຕົ້າໂຮມຝູງສັດລ້ຽງ ແລະ
ສັດໃຊ້ແຮງງານທັງໝົດຂອງຕົນ, ແລະ
ອອກຈາກແຜ່ນດິນ ແລະ ເດີນທາງເຂົ້າ
ໄປໃນຖິ່ນແຫ້ງແລ້ງກັນດານ ຊຶ່ງເປັນບ່ອນ
ທີ່ແຍກແຜ່ນດິນນີໄຟອອກຈາກແຜ່ນດິນ
ເຊຣາເຮັມລາ, ແລະ ຂ້າມມາໃກ້ຊາຍແດນ
ຂອງແຜ່ນດິນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ອຳໂມນໄດ້ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງ,
ຂ້າພະເຈົ້າພ້ອມດ້ວຍພີ່ນ້ອງຂອງຂ້າພະ
ເຈົ້າຈະເຂົ້າໄປໃນແຜ່ນດິນເຊຣາເຮັມລາ,
ແລະ ໃຫ້ພວກທ່ານລໍຖ້າພວກເຮົາຢູ່ບ່ອນ
ນີ້; ຈົນກວ່າວ່າພວກເຮົາຈະກັບມາ ເພາະ
ວ່າພວກເຮົາຈະລອງໃຈພີ່ນ້ອງຂອງພວກ
ເຮົາວ່າ ພວກເຂົາຈະໃຫ້ພວກເຮົາເຂົ້າໄປ
ຢູ່ໃນແຜ່ນດິນຂອງພວກເຂົາຫລືບໍ່.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ອຳໂມນກຳລັງເຂົ້າໄປໃນແຜ່ນ
ດິນ, ລາວກັບພີ່ນ້ອງຂອງລາວໄດ້ພົບກັບ
ແອວມາໃນ [ກ]ບ່ອນຊຶ່ງໄດ້ເວົ້າມາແລ້ວ;
ແລະ ຈົ່ງເບິ່ງ, ມັນເປັນການພົບພໍ້ຢ່າງໜ້າ
ປິຕິຍິນດີ.
17 ບັດນີ້ [ກ]ຄວາມສຸກຂອງອຳໂມນນັ້ນ
ຍິ່ງໃຫຍ່ທີ່ສຸດ ເຖິງກັບລາວເຕັມໄປດ້ວຍ
ຄວາມສຸກ; ແທ້ຈິງແລ້ວ, ລາວຖືກກືນເຂົ້າ
ໄປໃນຄວາມສຸກຂອງພຣະເຈົ້າຂອງລາວ,
ຈົນເຮັດໃຫ້ກຳລັງຂອງລາວ [ຂ]ໝົດໄປ;
ແລະ ລາວໄດ້ລົ້ມລົງຢູ່ກັບພື້ນດິນ [ຄ]ອີກ.
18 ບັດນີ້ມັນບໍ່ແມ່ນຄວາມສຸກແທ້ໆບໍ?
ຈົ່ງເບິ່ງ, ນີ້ເປັນຄວາມສຸກຊຶ່ງບໍ່ມີຜູ້ໃດໄດ້
ຮັບນອກຈາກຜູ້ສະແຫວງຫາຄວາມສຸກ
ດ້ວຍການສຳນຶກຜິດ ແລະ ການຖ່ອມຕົວ
ຢ່າງແທ້ຈິງເທົ່ານັ້ນ.
19 ບັດນີ້ຄວາມປິຕິຍິນດີຂອງແອວມາ
ໃນການພົບພໍ້ກັບພີ່ນ້ອງຂອງເພິ່ນນັ້ນຍິ່ງ
ໃຫຍ່ແທ້ໆ, ແລະ ອາໂຣນ, ອອມເນີ, ແລະ
ຮິມໄນ ກໍມີຄວາມປິຕິຍິນດີຄືກັນ; ແຕ່ຈົ່ງ
ເບິ່ງ ຄວາມປິຕິຍິນດີຂອງຄົນເຫລົ່ານັ້ນບໍ່
ໄດ້ເກີນກຳລັງຂອງພວກເຂົາເລີຍ.
20 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ແອວມາໄດ້ພາພີ່ນ້ອງຂອງເພິ່ນກັບຄືນ
ໄປຫາແຜ່ນດິນເຊຣາເຮັມລາ; ແມ່ນແຕ່
ໄປຫາເຮືອນຂອງເພິ່ນເອງ. ແລະ ເຂົາເຈົ້າ
ໄດ້ບອກ [ກ]ຫົວໜ້າຜູ້ຕັດສິນເຖິງເລື່ອງທັງ
ໝົດທີ່ໄດ້ເກີດຂຶ້ນກັບເຂົາເຈົ້າໃນແຜ່ນດິນ
ນີໄຟ, ໃນບັນດາຊາວເລມັນພີ່ນ້ອງຂອງ
ເຂົາເຈົ້າ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫົວ
ໜ້າຜູ້ຕັດສິນໄດ້ສົ່ງຂ່າວສານໄປທົ່ວແຜ່ນ
ດິນໂດຍປາດຖະໜາຢາກຮູ້ຈັກສຽງຂອງຜູ້
ຄົນກ່ຽວກັບການຮັບເອົາພີ່ນ້ອງຂອງພວກ
ເຂົາ, ຊຶ່ງເປັນຜູ້ຄົນຂອງອານໄທ-ນີໄຟ-
ລີໄຮ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນໃຫ້ສຽງວ່າ: ຈົ່ງເບິ່ງ, ພວກເຮົາຈະຍົກ
ແຜ່ນດິນເຈີຊອນໃຫ້ພວກເຂົາ, ຊຶ່ງມັນຢູ່
ທາງຕາເວັນອອກໃກ້ກັບທະເລ, ຊຶ່ງຕິດ

16 *ກ* ແອວ 17:1–4.
17 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
*ຂ* 1 ນຟ 1:7.
*ຄ* ແອວ 19:14.
20 *ກ* ແອວ 4:16–18.

ຕໍ່ກັບແຜ່ນດິນອຸດົມສົມບູນ ຊຶ່ງຢູ່ທາງໃຕ້ແຜ່ນດິນອຸດົມສົມບູນ; ແລະ ແຜ່ນດິນເຈີຊອນນີ້ເປັນແຜ່ນດິນທີ່ພວກເຮົາຈະມອບໃຫ້ແກ່ພີ່ນ້ອງຂອງພວກເຮົາ ເປັນມູນມໍລະດົກ.

23 ແລະ ຈົ່ງເບິ່ງ, ພວກເຮົາຈະຕັ້ງກອງທັບຂອງພວກເຮົາໄວ້ລະຫວ່າງແຜ່ນດິນເຈີຊອນ ແລະ ແຜ່ນດິນນີໄຟ, ເພື່ອພວກເຮົາຈະໄດ້ປົກປັກຮັກສາພີ່ນ້ອງຂອງພວກເຮົາໃນແຜ່ນດິນເຈີຊອນ; ແລະ ພວກເຮົາເຮັດສິ່ງນີ້ເພື່ອພີ່ນ້ອງຂອງພວກເຮົາ, ເນື່ອງດ້ວຍວ່າຄວາມຢ້ານກົວຂອງພວກເຂົາທີ່ຈະຈັບອາວຸດຂຶ້ນຕໍ່ສູ້ກັບພີ່ນ້ອງຂອງພວກເຂົາ, ໂດຍຢ້ານວ່າພວກເຂົາຈະເຮັດບາບອີກ, ແລະ ຄວາມຢ້ານກົວອັນໃຫຍ່ຫລວງນີ້ເກີດຂຶ້ນເພາະການກັບໃຈອັນປອດລ້າວຂອງພວກເຂົາ, ເນື່ອງຈາກຄາດຕະກຳຢ່າງຫລວງຫລາຍ ແລະ ຄວາມຊົ່ວຮ້າຍອັນເປັນຕາຢ້ານຂອງພວກເຂົາ.

24 ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາເຮັດສິ່ງນີ້ໄປເພື່ອພີ່ນ້ອງຂອງພວກເຮົາ, ເພື່ອພວກເຂົາຈະໄດ້ແຜ່ນດິນເຈີຊອນເປັນມູນມໍລະດົກ; ແລະ ພວກເຮົາຈະຄຸ້ມຄອງພວກເຂົາໃຫ້ພົ້ນຈາກສັດຕູຂອງພວກເຂົາ, ດ້ວຍກຳລັງຂອງກອງທັບຂອງພວກເຮົາ, ໂດຍມີເງື່ອນໄຂວ່າ ພວກເຂົາຈະຕ້ອງມອບເຂົ້າຂອງສ່ວນໜຶ່ງຂອງພວກເຂົາໃຫ້ແກ່ພວກເຮົາເພື່ອຈະໄດ້ບຳລຸງລ້ຽງກອງທັບ.

25 ບັດນີ້, ເຫດການໄດ້ບັງເກີດຂຶ້ນຄື ເມື່ອອຳໂມນໄດ້ຍິນເລື່ອງເຫລົ່ານີ້ແລ້ວ, ລາວກໍໄດ້ກັບຄືນໄປຫາຜູ້ຄົນຂອງອານໄທ-ນີໄຟ-ລີໄຮ, ແລະ ແອວມາກໍໄປກັບລາວຄືກັນ, ແລະ ໄດ້ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານເພື່ອໄປຫາບ່ອນທີ່ພວກເຂົາພັກເຊົາຢູ່, ແລະ ໄດ້ແຈ້ງເລື່ອງລາວທັງໝົດແກ່ພວກເຂົາ. ແລະ ແອວມາໄດ້ເລົ່າໃຫ້ພວກເຂົາຟັງເຖິງເລື່ອງ [ກ]ການປ່ຽນໃຈເຫລື້ອມໃສຂອງເພິ່ນ, ພ້ອມທັງເລື່ອງລາວຂອງອຳໂມນ, ແລະ ອາໂຣນ, ແລະ ພີ່ນ້ອງຂອງລາວນຳອີກ.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນໄດ້ເຮັດໃຫ້ພວກເຂົາມີຄວາມສຸກຫລາຍ. ແລະ ພວກເຂົາໄດ້ລົງໄປຫາແຜ່ນດິນເຈີຊອນ ແລະ ເຂົ້າເປັນເຈົ້າຂອງແຜ່ນດິນເຈີຊອນ; ແລະ ຊາວນີໄຟເອີ້ນພວກເຂົາວ່າຜູ້ຄົນຂອງອຳໂມນ; ສະນັ້ນພວກເຂົາຈຶ່ງແຕກຕ່າງອອກໄປຕາມຊື່ນັ້ນນັບແຕ່ເວລານັ້ນມາ.

27 ແລະ ພວກເຂົາໄດ້ຢູ່ຮ່ວມກັບບັນດາຜູ້ຄົນຂອງນີໄຟ, ແລະ ຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຊຶ່ງເປັນຂອງສາດສະໜາຈັກຂອງພຣະເຈົ້ານຳອີກ. ແລະ ພວກເຂົາດີເດັ່ນຂຶ້ນຍ້ອນວ່າຄວາມກະຕືລືລົ້ນຂອງພວກເຂົາທີ່ມີຕໍ່ພຣະເຈົ້າ ແລະ ຕໍ່ມະນຸດຊາດ; ເພາະພວກເຂົາ [ກ]ຊື່ສັດ ແລະ ຊື່ຕົງຢ່າງສົມບູນໃນທຸກສິ່ງ; ແລະ ພວກເຂົາມີສັດທາຢ່າງ [ຂ]ໝັ້ນຄົງໃນພຣະຄຣິດຈົນເຖິງວັນຕາຍ.

28 ແລະ ພວກເຂົາໄດ້ຫລຽວເບິ່ງການນອງເລືອດຂອງພີ່ນ້ອງຂອງຕົນດ້ວຍຄວາມກຽດຊັງທີ່ສຸດ; ແລະ ພວກເຂົາຈະບໍ່ຍອມຈັບອາວຸດຂຶ້ນມາຕໍ່ສູ້ກັບພີ່ນ້ອງຂອງພວກເຂົາອີກເລີຍ; ແລະ ພວກເຂົາບໍ່ເຄີຍຫລຽວເບິ່ງຄວາມຕາຍດ້ວຍຄວາມສະທ້ານຢ້ານກົວ ບໍ່ວ່າຈະຫລາຍໜ້ອຍພຽງໃດກໍຕາມ, ເພາະຄວາມຫວັງ ແລະ ຈຸດທີ່ໝັ້ນຂອງພວກເຂົາມີຢູ່ທີ່ພຣະຄຣິດ ແລະ ການຟື້ນຄືນຊີວິດ; ສະນັ້ນ, ຄວາມຕາຍຈຶ່ງຖືກກືນໄປຈາກພວກເຂົາໂດຍເອົາໄຊຊະນະ

25 *ກ* ມຊຍ 27:10–24.
27 *ກ* ຄມພ ຊື່ສັດ, ຄວາມຊື່ສັດ.
*ຂ* ແອວ 23:6.

ຂອງພຣະຄຣິດເໜືອມັນ.
29 ສະນັ້ນ, ພວກເຂົາຈຶ່ງຍອມຮັບ ກຄວາມ
ຕາຍໃນວິທີທີ່ທຸກທໍລະມານ ແລະ ເຈັບປວດ
ທີ່ສຸດ ຊຶ່ງພີ່ນ້ອງຂອງພວກເຂົາໄດ້ກະທຳ
ກັບພວກເຂົາ, ແທນທີ່ພວກເຂົາຈະຈັບດາບ
ຂຶ້ນມາຟັນພວກເຂົາ.
30 ແລະ ດັ່ງນັ້ນ ພວກເຂົາຈຶ່ງເປັນຜູ້ຄົນ
ທີ່ກະຕືລືລົ້ນ ແລະ ເປັນທີ່ຮັກຫອມ, ແລະ
ເປັນຜູ້ຄົນທີ່ໂປດປານຫລາຍທີ່ສຸດຂອງ
ພຣະຜູ້ເປັນເຈົ້າ.

## ບົດທີ 28

*ຊາວເລມັນໄດ້ເສຍໄຊໃນການສູ້ຮົບຄັ້ງຍິ່ງໃຫຍ່—ຄົນເປັນຈຳນວນຫລາຍໝື່ນຄົນຖືກຂ້າຕາຍ—ຄົນຊົ່ວໄດ້ຖືກສົ່ງໄປຫາສະພາບທີ່ຈິບຫາຍອັນບໍ່ມີບ່ອນສິ້ນສຸດ; ສ່ວນຄົນຊອບທຳນັ້ນໄດ້ຮັບຄວາມຜາສຸກອັນບໍ່ມີບ່ອນສິ້ນສຸດ. ປະມານ 77–76 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກຜູ້ຄົນຂອງອຳໂມນໄດ້ຕັ້ງຖິ່ນ
ຖານໃນແຜ່ນດິນ ກເຈີຊອນແລ້ວ, ແລະ
ສາດສະໜາຈັກໄດ້ຖືກສະຖາປະນາຂຶ້ນ
ໃນແຜ່ນດິນເຈີຊອນນຳອີກ, ແລະ ກອງ
ທັບຂອງຊາວນີໄຟໄດ້ມາຕັ້ງຢູ່ໂດຍອ້ອມ
ຮອບແຜ່ນດິນເຈີຊອນ, ແທ້ຈິງແລ້ວ, ຢູ່ໃນ
ຊາຍແດນຂອງແຜ່ນດິນເຊຣາເຮັມລາໂດຍ
ຮອບ; ຈົ່ງເບິ່ງ, ກອງທັບຂອງຊາວເລມັນ
ໄດ້ຕິດຕາມພີ່ນ້ອງຂອງພວກເຂົາເຂົ້າໄປ
ໃນຖິ່ນແຫ້ງແລ້ງກັນດານ.
2 ແລະ ຈຶ່ງມີການສູ້ຮົບກັນເທື່ອຍິ່ງໃຫຍ່
ທີ່ສຸດເກີດຂຶ້ນ; ແທ້ຈິງແລ້ວ, ມັນເປັນການ
ສູ້ຮົບຢ່າງທີ່ບໍ່ເຄີຍມີມາກ່ອນໃນບັນດາຜູ້
ຄົນທັງໝົດໃນແຜ່ນດິນນັບຕັ້ງແຕ່ເວລາ
ທີ່ລີໄຮອອກຈາກເຢຣູຊາເລັມມາ; ແທ້ຈິງ
ແລ້ວ, ຊາວເລມັນຫລາຍໝື່ນຄົນຖືກຂ້າ
ຕາຍ ແລະ ໄດ້ແຕກກະຈັດກະຈາຍໄປທົ່ວ
ທິບ.
3 ແທ້ຈິງແລ້ວ, ແລະ ມີການລົ້ມຕາຍ
ເທື່ອຍິ່ງໃຫຍ່ທີ່ສຸດ ໃນບັນດາຜູ້ຄົນຂອງ
ນີໄຟ; ເຖິງຢ່າງໃດກໍຕາມ, ຊາວເລມັນໄດ້
ຖືກ ກຂັບໄລ່ ແລະ ແຕກກະຈັດກະຈາຍ
ໄປ, ແລະ ຜູ້ຄົນຂອງນີໄຟໄດ້ກັບຄືນໄປຫາ
ແຜ່ນດິນຂອງຕົນອີກຄືເກົ່າ.
4 ແລະ ບັດນີ້ມັນເປັນເວລາທີ່ມີການໄວ້
ທຸກ ແລະ ການຄ່ຳຄວນເທື່ອຍິ່ງໃຫຍ່ທີ່ໄດ້
ຍິນໄປທົ່ວແຜ່ນດິນໃນບັນດາຜູ້ຄົນທັງໝົດ
ຂອງນີໄຟ—
5 ແທ້ຈິງແລ້ວ, ສຽງຮ້ອງໄຫ້ຂອງແມ່
ໝ້າຍທີ່ໄວ້ທຸກນຳຜົວຂອງນາງ, ແລະ ພໍ່ໄວ້
ທຸກນຳລູກຊາຍຂອງຕົນ, ແລະ ລູກສາວໄວ້
ທຸກນຳອ້າຍ, ແທ້ຈິງແລ້ວ, ລູກຊາຍໄວ້ທຸກ
ນຳພໍ່; ແລະ ສຽງຮ້ອງໄຫ້ແຫ່ງຄວາມເປັນ
ທຸກໄດ້ຍິນໄປທົ່ວທຸກບ່ອນ, ຊຶ່ງພວກເຂົາ
ໄດ້ໄວ້ທຸກນຳຍາດພີ່ນ້ອງຂອງຕົນທີ່ຖືກຂ້າ
ຕາຍ.
6 ແລະ ບັດນີ້ ນີ້ເປັນວັນທີ່ເສົ້າສະຫລົດ
ໃຈແທ້ໆ; ແທ້ຈິງແລ້ວ, ມັນເປັນເວລາແຫ່ງ
ການນອບນ້ອມ ແລະ ເວລາແຫ່ງ ກການຖື
ສິນອົດເຂົ້າ ແລະ ອະທິຖານຢ່າງໜັກ.
7 ແລະ ປີທີສິບຫ້າແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງແບບນີ້;
8 ແລະ ນີ້ຄືເລື່ອງລາວຂອງອຳໂມນ
ແລະ ພີ່ນ້ອງຂອງລາວ, ກ່ຽວກັບການ

29 *ກ* ແອວ 24:20–23.
**28** 1 *ກ* ແອວ 27:22; 30:1, 19.
3 *ກ* ແອວ 30:1.
6 *ກ* ແອວ 30:2.

ເດີນທາງຂອງພວກເຂົາໃນແຜ່ນດິນນີໄຟ,
ແລະ ຄວາມທຸກທໍລະມານຂອງພວກເຂົາ
ໃນແຜ່ນດິນ, ແລະ ຄວາມເສົ້າສະຫລົດ
ໃຈ ແລະ ຄວາມທຸກຂອງພວກເຂົາ, ແລະ
ຄວາມຜາສຸກທີ່ພວກເຂົາ [ກ]ບໍ່ອາດສາມາດ
ຈະເຂົ້າໃຈໄດ້, ແລະ ການຕ້ອນຮັບ ແລະ
ຄວາມປອດໄພຂອງພວກພີ່ນ້ອງໃນແຜ່ນ
ດິນເຈີຊອນ. ແລະ ບັດນີ້ຂໍພຣະຜູ້ເປັນ
ເຈົ້າພຣະຜູ້ໄຖ່ຂອງຄົນທັງປວງຈົ່ງໂປດ
ປະທານພອນໃຫ້ແກ່ຈິດວິນຍານຂອງຄົນ
ເຫລົ່ານີ້ຕະຫລອດໄປດ້ວຍເຖີດ.
9 ແລະ ນີ້ຄື ເລື່ອງລາວຂອງສົງຄາມ
ແລະ ການຂັດແຍ້ງກັນໃນບັນດາຊາວ
ນີໄຟ, ແລະ ສົງຄາມລະຫວ່າງຊາວນີໄຟ
ກັບຊາວເລມັນນຳອີກ; ແລະ ປີທີສິບຫ້າ
ແຫ່ງການປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດ
ລົງ.
10 ແລະ ນັບຕັ້ງແຕ່ປີທຳອິດເຖິງປີທີສິບ
ຫ້າໄດ້ເຮັດໃຫ້ເກີດມີຜູ້ຄົນຫລາຍພັນຄົນ
ຖືກຂ້າຕາຍໄປ; ແທ້ຈິງແລ້ວ, ມັນໄດ້ເຮັດ
ໃຫ້ເກີດພາບອັນເປັນຕາຢ້ານຂອງການ
ນອງເລືອດເກີດຂຶ້ນ.
11 ແລະ ຮ່າງກາຍຂອງຫລາຍພັນຄົນ
ຖືກ ວາງໄວ້ໃນຫລຸມ ສົບ, ໃນຂະນະທີ່
ຮ່າງກາຍຂອງຫລາຍພັນຄົນກຳລັງ [ກ]ເນົ່າ
ເປື່ອຍເປັນກອງຢູ່ເທິງໜ້າດິນ; ແທ້ຈິງ
ແລ້ວ, ຫລາຍພັນຄົນໄດ້ [ຂ]ໄວ້ທຸກເພາະວ່າ
ການສູນເສຍຍາດພີ່ນ້ອງຂອງຕົນ, ຍ້ອນ
ວ່າພວກເຂົາມີເຫດຜົນທີ່ຈະຢ້ານກົວຕາມ
ຄຳສັນຍາຂອງພຣະຜູ້ເປັນເຈົ້າ, ວ່າພວກ
ເຂົາຈະຖືກສົ່ງໄປສູ່ສະພາບແຫ່ງຄວາມຈິບ
ຫາຍອັນບໍ່ມີບ່ອນສິ້ນສຸດ.
12 ຂະນະທີ່ຄົນອື່ນຫລາຍພັນຄົນເປັນ
ທຸກແທ້ໆຢູ່ນັ້ນເພາະການສູນເສຍຍາດພີ່
ນ້ອງຂອງຕົນ, ແຕ່ພວກເຂົາຍັງປິຕິຍິນດີ
ໃນຄວາມຫວັງ, ແລະ ແມ່ນແຕ່ຮູ້ຈັກຕາມ
[ກ]ຄຳສັນຍາຂອງພຣະຜູ້ເປັນເຈົ້າວ່າ ພວກ
ເຂົາຈະຖືກຍົກຂຶ້ນໃຫ້ຢູ່ທາງເບື້ອງຂວາ
ພຣະຫັດຂອງພຣະເຈົ້າໃນສະພາບແຫ່ງ
ຄວາມສຸກອັນບໍ່ມີບ່ອນສິ້ນສຸດ.
13 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ
[ກ]ຄວາມບໍ່ສະເໝີພາບຂອງມະນຸດນັ້ນມີ
ຫລາຍຊ່ຳໃດ, ເພາະວ່າບາບ ແລະ ການ
ລ່ວງລະເມີດ ແລະ ອຳນາດຂອງມານຊຶ່ງ
ເກີດຂຶ້ນດ້ວຍ [ຂ]ແຜນການທີ່ມີເລ່ຫລ່ຽມ
ຊຶ່ງມັນຄົ້ນຄິດຂຶ້ນມາເພື່ອເຮັດໃຫ້ໃຈຂອງ
ມະນຸດຖືກບ້ວງ.
14 ແລະ ພວກ ເຮົາ ຈຶ່ງ ເຫັນ ການ ເອີ້ນ
ຄວາມພາກພຽນຂອງມະນຸດຄັ້ງໃຫຍ່ເພື່ອ
ໃຫ້ເຮັດວຽກໃນ [ກ]ສວນອະງຸ່ນຂອງພຣະ
ຜູ້ເປັນເຈົ້າດັ່ງນັ້ນ; ແລະ ພວກເຮົາຈຶ່ງ
ເຫັນເຫດຜົນອັນຍິ່ງໃຫຍ່ຂອງການເສົ້າ
ສະຫລົດໃຈ, ແລະ ການຊື່ນຊົມນຳອີກດັ່ງ
ນັ້ນ—ມີຄວາມເສົ້າສະຫລົດໃຈຍ້ອນວ່າ
ຄວາມຕາຍ ແລະ ຄວາມພິນາດໃນບັນ
ດາມະນຸດ, ແລະ ມີຄວາມຊື່ນຊົມຍ້ອນວ່າ
[ຂ]ຄວາມສະຫວ່າງຂອງພຣະຄຣິດຍັງມີຕໍ່ຊີ
ວິດຢູ່.

## ບົດທີ 29

*ແອວມາປາດຖະໜາທີ່ຈະຮ້ອງປ່າວເຖິງ
ການກັບໃຈດ້ວຍສຽງຂອງທູດ—ພຣະຜູ້
ເປັນເຈົ້າອະນຸຍາດໃຫ້ມີຜູ້ສອນແກ່ທຸກໆ*

8 *ກ* ແອວ 27:16–19.
11 *ກ* ແອວ 16:11.
*ຂ* ແອວ 48:23; ຄພ 42:45–46.
12 *ກ* ແອວ 11:41.
13 *ກ* 1 ນຟ 17:35.
*ຂ* 2 ນຟ 9:28.
14 *ກ* ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
*ຂ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.

*ປະຊາຊາດ—ແອວມາພາກພູມໃຈໃນວຽກ
ງານຂອງພຣະຜູ້ເປັນເຈົ້າ ແລະ ໃນຄວາມ
ສຳເລັດຂອງອຳໂມນ ແລະ ພີ່ນ້ອງຂອງ
ເພິ່ນ. ປະມານ 76 ປີ ກ່ອນ ຄ.ສ.*

1 ໂອ້ ຖ້າຫາກຂ້າພະເຈົ້າເປັນທູດ, ແລະ
ສາມາດປາດຖະໜາໄດ້ຕາມໃຈຊອບຂອງ
ຂ້າພະເຈົ້າ, ແລ້ວຂ້າພະເຈົ້າຈະອອກໄປ
ເວົ້າດ້ວຍສຽງແກຂອງພຣະເຈົ້າ, ດ້ວຍສຽງ
ທີ່ສັ່ນສະເທືອນແຜ່ນດິນໂລກ, ແລະ ຮ້ອງ
ປ່າວການກັບໃຈຕໍ່ທຸກໆຄົນ!
2 ແທ້ຈິງແລ້ວ, ຂ້າພະເຈົ້າຈະປະກາດ
ເຖິງເລື່ອງການກັບໃຈ, ແລະ ແຜນແຫ່ງ
ການໄຖ່ແກ່ທຸກຈິດວິນຍານໃຫ້ດັ່ງຄືສຽງ
ຟ້າຮ້ອງ, ເພື່ອພວກເຂົາຈະກັບໃຈ ແລະ
[ກ]ມາຫາພຣະເຈົ້າຂອງພວກເຮົາ, ເພື່ອພວກ
ເຂົາຈະບໍ່ມີຄວາມເສົ້າສະຫລົດໃຈໃນທົ່ວ
ຜືນແຜ່ນດິນໂລກອີກເລີຍ.
3 ແຕ່ ຈົ່ງ ເບິ່ງ, ຂ້າພະເຈົ້າເປັນມະນຸດ,
ແລະ ເຮັດບາບໄດ້ໃນຄວາມປາດຖະໜາ
ຂອງຂ້າພະເຈົ້າເອງ; ດັ່ງນັ້ນຂ້າພະເຈົ້າ
ຄວນພໍໃຈກັບສິ່ງທີ່ພຣະຜູ້ເປັນເຈົ້າໄດ້ແບ່ງ
ປັນໃຫ້ຂ້າພະເຈົ້າ.
4 ຂ້າພະເຈົ້າບໍ່ຄວນຈະປ່ຽນຄວາມປາດ
ຖະໜາຂອງຂ້າພະເຈົ້າ ຊຶ່ງເປັນຄຳສັ່ງອັນ
ໝັ້ນຄົງຂອງພຣະຜູ້ທ່ຽງທຳ, ເພາະຂ້າພະ
ເຈົ້າຮູ້ວ່າ ພຣະອົງປະທານໃຫ້ມະນຸດຕາມ
[ກ]ຄວາມປາດຖະໜາຂອງເຂົາ, ບໍ່ວ່າມັນຈະ
ເປັນໄປເພື່ອຄວາມຕາຍ ຫລື ເພື່ອຊີວິດ;
ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າ ພຣະອົງໄດ້
ແບ່ງປັນໃຫ້ມະນຸດ, ແທ້ຈິງແລ້ວ, ໄດ້ມອບ
ຄຳສັ່ງແກ່ເຂົາຊຶ່ງເປັນຄຳສັ່ງທີ່ປ່ຽນແປງບໍ່
ໄດ້, ອີງຕາມ [ຂ]ຄວາມປະສົງຂອງເຂົາ, ບໍ່ວ່າ
ມັນຈະເປັນໄປເພື່ອຄວາມລອດ ຫລື ເພື່ອ
ຄວາມພິນາດ.
5 ແທ້ຈິງແລ້ວ, ແລະ ຂ້າພະເຈົ້າຮູ້ວ່າ
ຄວາມດີ ແລະ ຄວາມຊົ່ວມາຢູ່ຕໍ່ໜ້າມະນຸດ
ທັງປວງ; ຜູ້ໃດທີ່ບໍ່ຮູ້ຈັກ ຄວາມດີຈາກ
ຄວາມຊົ່ວກໍບໍ່ມີຂໍ້ຕຳນິ; ແຕ່ຜູ້ໃດທີ່ [ກ]ຮູ້ຈັກ
ຄວາມດີ ແລະ ຄວາມຊົ່ວ, ເຂົາຈະໄດ້ຮັບ
ຕາມຄວາມປາດຖະໜາຂອງເຂົາ ບໍ່ວ່າເຂົາ
ປາດຖະໜາຄວາມດີ ຫລື ຄວາມຊົ່ວ, ຊີວິດ
ຫລື ຄວາມຕາຍ, ຄວາມຊື່ນຊົມ ຫລື ຄວາມ
ເສຍໃຈໃນ [ຂ]ຈິດສຳນຶກ.
6 ບັດນີ້, ໂດຍທີ່ເຫັນວ່າຂ້າພະເຈົ້າເອງ
ຮູ້ຈັກເລື່ອງເຫລົ່ານີ້ແລ້ວ, ເປັນຫຍັງຂ້າພະ
ເຈົ້າຈຶ່ງບໍ່ປາດຖະໜາເກີນກວ່າທີ່ຈະເຮັດ
ວຽກງານ ຊຶ່ງຂ້າພະເຈົ້າຖືກເອີ້ນມາໃຫ້
ເຮັດ?
7 ເປັນຫຍັງຂ້າພະເຈົ້າຈຶ່ງປາດຖະໜາ
ຢາກເປັນທູດ, ເພື່ອຈະໄດ້ປະກາດໄປຈົນ
ເຖິງທີ່ສຸດຂອງແຜ່ນດິນໂລກ?
8 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າປະທານ
ໃຫ້ [ກ]ທຸກປະຊາຊາດດ້ວຍຊາດ ແລະ [ຂ]ພາ
ສາຂອງຕົນເອງເພື່ອສິດສອນພຣະຄຳຂອງ
ພຣະອົງ, ແທ້ຈິງແລ້ວ, ໃນສະຕິປັນຍາ,
ທຸກສິ່ງທຸກຢ່າງທີ່ພຣະອົງ [ຄ]ເຫັນວ່າເໝາະ
ສົມທີ່ພວກເຂົາຄວນມີ; ສະນັ້ນ ເຮົາຈຶ່ງ
ເຫັນໄດ້ວ່າພຣະຜູ້ເປັນເຈົ້າແນະນຳດ້ວຍ
ຄວາມສະຫລຽວສະຫລາດຕາມສິ່ງທີ່ທ່ຽງ
ທຳ ແລະ ເປັນຄວາມຈິງ.
9 ຂ້າພະເຈົ້າຮູ້ຈັກເລື່ອງທີ່ພຣະຜູ້ເປັນ
ເຈົ້າບັນຊາຂ້າພະເຈົ້າ, ແລະ ຂ້າພະເຈົ້າ
ປາບປື້ມໃນເລື່ອງນັ້ນ. ຂ້າພະເຈົ້າບໍ່ໄດ້

**29** 2 *ກ* ອມນ 1:26; 3 ນຟ 21:20.
4 *ກ* ພສສ 37:4.
*ຂ* ຄມພ ອຳເພີໃຈ.
5 *ກ* 2 ນຟ 2:18, 26;
ມຣນ 7:15–19.
ຄມພ ການສາມາດສັງ
ເກດ, ຂອງປະທານແຫ່ງ.
*ຂ* ຄມພ ສຳນຶກ,
ຄວາມສຳນຶກ.
8 *ກ* 2 ນຟ 29:12.
*ຂ* ຄພ 90:11.
*ຄ* ແອວ 12:9–11.

ກປາບປື້ມໃນຕົວຂ້າພະເຈົ້າເອງ, ແຕ່ຂ້າ
ພະເຈົ້າປາບປື້ມໃນສິ່ງທີ່ພຣະຜູ້ເປັນເຈົ້າ
ບັນຊາຂ້າພະເຈົ້າ; ແທ້ຈິງແລ້ວ, ນີ້ຄືຄວາມ
ປາບປື້ມຂອງຂ້າພະເຈົ້າ ເພື່ອບາງທີຂ້າພະ
ເຈົ້າອາດຈະເປັນເຄື່ອງມືໃນພຣະຫັດຂອງ
ພຣະເຈົ້າໃນການນຳຈິດວິນຍານດວງໜຶ່ງ
ມາສູ່ການກັບໃຈ; ແລະ ນີ້ຄືຄວາມສຸກຂອງ
ຂ້າພະເຈົ້າ.
10 ແລະ ຈົ່ງເບິ່ງ, ເມື່ອຂ້າພະເຈົ້າເຫັນ
ພີ່ນ້ອງຂອງຂ້າພະເຈົ້າຫລາຍຄົນທີ່ສຳ
ນຶກຜິດດ້ວຍຄວາມຈິງໃຈ, ແລ້ວເຂົ້າມາ
ຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາ, ເວລານັ້ນຈິດວິນຍານຂອງຂ້າ
ພະເຈົ້າເຕັມໄປດ້ວຍຄວາມສຸກ; ແລ້ວຂ້າ
ພະເຈົ້າສຳນຶກໄດ້ວ່າ ມີ ກສິ່ງໃດແດ່ທີ່ພຣະ
ຜູ້ເປັນເຈົ້າໄດ້ກະທຳເພື່ອຂ້າພະເຈົ້າ; ແທ້
ຈິງແລ້ວ, ພຣະອົງໄດ້ຍິນຄຳອະທິຖານ
ຂອງຂ້າພະເຈົ້າ; ແທ້ຈິງແລ້ວ, ຂ້າພະເຈົ້າ
ສຳນຶກເຖິງພຣະຫັດທີ່ມີຄວາມເມດຕາປາ
ນີຂອງພຣະອົງຊຶ່ງເດ່ມາຫາຂ້າພະເຈົ້າ.
11 ແທ້ຈິງແລ້ວ, ແລະ ຂ້າພະເຈົ້າສຳນຶກ
ໄດ້ເຖິງຄວາມເປັນຊະເລີຍຂອງບັນພະບຸ
ລຸດຂອງຂ້າພະເຈົ້ານຳອີກ; ເພາະຂ້າພະ
ເຈົ້າຮູ້ຈັກວ່າ ກພຣະຜູ້ເປັນເຈົ້າໄດ້ປົດປ່ອຍ
ເຂົາເຈົ້າອອກຈາກຄວາມເປັນທາດ ແລະ
ດ້ວຍເຫດນີ້ ຈຶ່ງໄດ້ສະຖາປະນາສາດສະ
ໜາຈັກຂອງພຣະອົງຂຶ້ນ; ແທ້ຈິງແລ້ວ, ອົງ
ພຣະຜູ້ເປັນເຈົ້າ, ພຣະເຈົ້າຂອງອັບຣາ
ຮາມ, ພຣະເຈົ້າຂອງອີຊາກ, ແລະ ພຣະ
ເຈົ້າຂອງຢາໂຄບໄດ້ປົດປ່ອຍເຂົາເຈົ້າ
ອອກຈາກຄວາມເປັນທາດ.
12 ແທ້ຈິງແລ້ວ, ຂ້າພະເຈົ້າຈື່ຈຳຢູ່
ສະເໝີເຖິງການເປັນຊະເລີຍຂອງບັນພະ
ບຸລຸດຂອງຂ້າພະເຈົ້າ; ແລະ ພຣະເຈົ້າອົງ
ດຽວກັນນັ້ນໄດ້ ກປົດປ່ອຍເຂົາເຈົ້າໃຫ້ພົ້ນ
ຈາກກຳມືຂອງຊາວເອຢິບ ແລະ ໄດ້ປົດ
ປ່ອຍເຂົາເຈົ້າອອກຈາກຄວາມເປັນທາດ.
13 ແທ້ຈິງແລ້ວ, ແລະ ພຣະເຈົ້າອົງດຽວ
ກັນນັ້ນ ຊຶ່ງໄດ້ສະຖາປະນາສາດສະໜາ
ຈັກຂອງພຣະອົງຂຶ້ນໃນບັນດາພວກເຂົາ;
ແທ້ຈິງແລ້ວ, ແມ່ນພຣະເຈົ້າອົງດຽວກັນນັ້ນ
ທີ່ໄດ້ເອີ້ນໃຫ້ຂ້າພະເຈົ້າຮັບເອົາຕຳແໜ່ງ
ອັນສັກສິດ, ເພື່ອສັ່ງສອນພຣະຄຳໃຫ້ແກ່
ຜູ້ຄົນພວກນີ້, ແລະ ໄດ້ປະທານຄວາມສຳ
ເລັດຢ່າງຫລວງຫລາຍໃຫ້ແກ່ຂ້າພະເຈົ້າ,
ຊຶ່ງມັນເຮັດໃຫ້ຂ້າພະເຈົ້າເຕັມໄປດ້ວຍ
ກຄວາມສຸກ.
14 ແຕ່ ຂ້າພະ ເຈົ້າບໍ່ ໄດ້ ປິ ຕິ ຍິນ ດີ ໃນ
ຄວາມສຳເລັດຂອງຂ້າພະເຈົ້າແຕ່ຝ່າຍ
ດຽວເທົ່ານັ້ນ, ແຕ່ຂ້າພະເຈົ້າເຕັມປ່ຽມໄປ
ດ້ວຍຄວາມສຸກໃນ ກຄວາມສຳເລັດຂອງ
ພີ່ນ້ອງຂອງຂ້າພະເຈົ້າ, ຜູ້ທີ່ໄດ້ຂຶ້ນໄປຫາ
ແຜ່ນດິນນີໄຟນຳອີກ.
15 ຈົ່ງເບິ່ງ, ເຂົາເຈົ້າໄດ້ອອກແຮງງານ
ຢ່າງດຸໝັ່ນ, ແລະ ໄດ້ນຳເອົາຜົນງານຢ່າງ
ຫລວງຫລາຍອອກມາ; ແລະ ລາງວັນຂອງ
ພວກເຂົານັ້ນຍິ່ງໃຫຍ່ແທ້ໆ!
16 ບັດນີ້, ເມື່ອຂ້າພະເຈົ້າຄິດເຖິງຄວາມ
ສຳເລັດຂອງພີ່ນ້ອງເຫລົ່ານີ້ຂອງຂ້າພະ
ເຈົ້າ ຈິດວິນຍານຂອງຂ້າພະເຈົ້າກໍຖືກພາ
ໄປ, ຈົນວ່າມັນຖືກແຍກອອກຈາກຮ່າງ
ກາຍ, ຄືກັບວ່າ ມັນເປັນຄວາມສຸກທີ່ສຸດ
ຂອງຂ້າພະເຈົ້າ.
17 ແລະ ບັດ ນີ້ ຂໍ ພຣະ ເຈົ້າ ຈົ່ງ ໂປດ
ປະທານແກ່ຄົນເຫລົ່ານີ້, ພີ່ນ້ອງຂອງຂ້າ
ພະເຈົ້າ, ເພື່ອພວກເຂົາຈະໄດ້ນັ່ງລົງໃນ

9 *ກ* ແອວ 26:12.
10 *ກ* ມຊຢ 27:11–31.
11 *ກ* ມຊຢ 24:16–21; ແອວ 5:3–5.
12 *ກ* ອພຍ 14:30–31.
13 *ກ* ຄພ 18:14–16.
14 *ກ* ແອວ 17:1–4.

ອານາຈັກຂອງພຣະເຈົ້າດ້ວຍເຖີດ; ແທ້ຈິງ
ແລ້ວ, ແລະ ໃຫ້ແກ່ຄົນທັງໝົດຜູ້ເປັນ ຜົນ
ງານ ຈາກການອອກແຮງງານ ຂອງພວກ
ເຂົານຳອີກ. ເພື່ອພວກເຂົາຈະບໍ່ອອກໄປ
ອີກ, ແຕ່ ເພື່ອ ພວກ ເຂົາ ຈະ ສັນ ລະ ເສີນ
ພຣະອົງຕະຫລອດໄປ. ແລະ ຂໍພຣະເຈົ້າ
ຈົ່ງ ໂປດປະທານ ເພື່ອ ໃຫ້ ເປັນ ໄປ ຕາມຄຳ
ເວົ້າຂອງຂ້າພະເຈົ້າທີ່ໄດ້ເວົ້າໄວ້ດ້ວຍເຖີດ.
ອາແມນ.

## ບົດທີ 30

*ໂຄຣິຫໍ, ການຕໍ່ຕ້ານພຣະຄຣິດ, ການຫົວເຍາະເຍີ້ຍພຣະຄຣິດ, ການຊຶດໃຊ້, ແລະ ວິນຍານແຫ່ງການທຳນາຍ—ລາວສິດສອນວ່າມັນບໍ່ມີພຣະເຈົ້າ, ບໍ່ມີການຕົກຂອງມະນຸດ, ບໍ່ມີການລົງໂທດສຳລັບບາບ, ແລະ ບໍ່ມີພຣະຄຣິດ—ແອວມາໃຫ້ຖ້ອຍຄຳວ່າພຣະຄຣິດຈະສະເດັດມາ ແລະ ວ່າທຸກສິ່ງທຸກຢ່າງຊີ້ໃຫ້ເຫັນວ່າມີພຣະເຈົ້າ—ໂຄຣິຫໍຂົ່ມຂູ່ເພື່ອຢາກເຫັນເຄື່ອງໝາຍ ແລະ ຖືກເຮັດໃຫ້ເປັນຄົນໄບ້—ມານມາປະກົດຕໍ່ໂຄຣິຫໍໃນລັກສະນະຂອງທູດ ແລະ ໄດ້ສິດສອນລາວວິທີທີ່ຈະເວົ້າ—ໂຄຣິຫໍໄດ້ຖືກຢຽບຍ່ຳ ແລະ ໄດ້ຕາຍໄປ. ປະມານ 76–74 ປີ ກ່ອນ ຄ.ສ.*

1 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງ ຈາກ [ກ]ຜູ້ຄົນຂອງອຳໂມນໄດ້ຕັ້ງ
ຖິ່ນຖານຢູ່ໃນແຜ່ນດິນເຈີຊອນແລ້ວ, ແທ້
ຈິງແລ້ວ, ແລະ ຫລັງຈາກທີ່ຊາວເລມັນຖືກ
[ຂ]ຂັບໄລ່ອອກໄປຈາກແຜ່ນດິນແລ້ວ, ແລະ
ຊາກສົບຂອງພວກເຂົາໄດ້ຖືກເອົາໄປຝັງ
ໂດຍຜູ້ຄົນຜູ້ທີ່ຢູ່ໃນແຜ່ນດິນນັ້ນ—
2 ບັດນີ້ພວກເຂົາບໍ່ໄດ້ນັບຈຳນວນຊາກ
ສົບຂອງຊາວເລມັນ ຍ້ອນວ່າຄວາມຫລວງ
ຫລາຍຂອງມັນ; ທັງບໍ່ໄດ້ນັບຈຳນວນຊາກ
ສົບຂອງຊາວນີໄຟຄືກັນ—ແຕ່ເຫດການ
ໄດ້ບັງເກີດຂຶ້ນ ຫລັງຈາກທີ່ພວກເຂົາໄດ້
ຝັງສົບຂອງຜູ້ຕາຍແລ້ວ, ແລະ ຫລັງຈາກມື້
ແຫ່ງການຖືສິນອົດເຂົ້າ ແລະ ການໄວ້ທຸກ,
ແລະ ການອະທິຖານລ່ວງໄປແລ້ວ, ມັນ
ຈຶ່ງເລີ່ມມີສັນຕິສຸກທົ່ວແຜ່ນດິນ (ແລະ ມັນ
ເປັນໄປໃນປີທີສິບຫົກແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ).
3 ແທ້ຈິງແລ້ວ, ແລະ ຜູ້ຄົນໄດ້ຍຶດຖືທີ່
ຈະຮັກສາພຣະບັນຍັດຂອງພຣະຜູ້ເປັນ
ເຈົ້າ; ແລະ ພວກເຂົາໄດ້ເຄັ່ງຄັດໃນການ
ຍຶດຖື [ກ]ພິທີການຂອງພຣະເຈົ້າຕາມກົດ
ຂອງໂມເຊ; ເພາະວ່າພວກເຂົາໄດ້ຮັບການ
ສິດສອນໃຫ້ [ຂ]ຮັກສາກົດຂອງໂມເຊໄປຈົນ
ກວ່າມັນຈະສົມບູນ.
4 ແລະ ດັ່ງນັ້ນຜູ້ຄົນຈຶ່ງບໍ່ມີຄວາມຫຍຸ້ງ
ຍາກຕະຫລອດປີທີສິບຫົກແຫ່ງການປົກ
ຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີ
ທີສິບເຈັດແຫ່ງການປົກຄອງຂອງຜູ້ຕັດສິນ
ມັນກໍຍັງມີສັນຕິສຸກຢູ່ເລື້ອຍໆໄປ.
6 ແຕ່ ເຫດການໄດ້ບັງເກີດຂຶ້ນໃນທ້າຍ
ປີທີສິບເຈັດ ມີຄົນຜູ້ໜຶ່ງໄດ້ເຂົ້າມາໃນແຜ່ນ
ດິນເຊຣາເຮັມລາ, ແລະ ລາວເປັນ [ກ]ຜູ້ຕໍ່
ຕ້ານພຣະຄຣິດ, ແລະ ລາວໄດ້ເລີ່ມສັ່ງ
ສອນຜູ້ຄົນບໍ່ໃຫ້ເຫັນດີກັບຄຳທຳນາຍ ຊຶ່ງ
ສາດສະດາໄດ້ທຳນາຍກ່ຽວກັບການສະ
ເດັດມາຂອງພຣະຄຣິດ.
7 ບັດນີ້ມັນບໍ່ມີກົດໝາຍທີ່ຈະຂັດຂວາງ
[ກ]ຄວາມເຊື່ອຖືຂອງຄົນ, ເພາະມັນເປັນສິ່ງ

**30** 1 *ກ* ແອວ 27:25–26. ຄມພ ອານໄທ-ນີໄຟ-ລີໄຮ.
*ຂ* ແອວ 28:1–3.
3 *ກ* ຄມພ ກົດຂອງໂມເຊ.
*ຂ* 2 ນຟ 25:24–27; ແອວ 25:15.
6 *ກ* ຄມພ ຜູ້ຕໍ່ຕ້ານພຣະຄຣິດ.
7 *ກ* ແອວ 1:17.

ກົງກັນຂ້າມກັບພຣະບັນຍັດຂອງພຣະເຈົ້າ
ທີ່ຈະມີກົດຊຶ່ງນຳພາມະນຸດໄປສູ່ພື້ນຖານທີ່
ບໍ່ສະເໝີພາບກັນ.
8 ເພາະຂໍ້ຄວາມພຣະຄຳພີໄດ້ກ່າວດັ່ງນີ້:
ເຈົ້າຈົ່ງ [ກ]ເລືອກເອົາໃນມື້ນີ້ວ່າ, ເຈົ້າຈະຮັບ
ໃຊ້ຜູ້ໃດ.
9 ບັດນີ້ຖ້າຫາກຜູ້ໃດປາດຖະໜາທີ່ຈະ
ຮັບໃຊ້ພຣະເຈົ້າ, ມັນກໍເປັນສິດທິຂອງເຂົາ;
ຫລື ຖ້າຫາກເຂົາຈະເຊື່ອຟັງພຣະເຈົ້າ, ມັນ
ກໍເປັນສິດທິຂອງເຂົາທີ່ຈະຮັບໃຊ້ພຣະອົງ;
ແຕ່ຖ້າຫາກເຂົາບໍ່ເຊື່ອໃນພຣະອົງ ມັນກໍບໍ່
ມີກົດອັນໃດທີ່ຈະມາລົງໂທດເຂົາໄດ້.
10 ແຕ່ຖ້າຫາກເຂົາເຮັດການຄາດຕະກຳ
ເຂົາກໍຈະຖືກລົງໂທດຈົນເຖິງແກ່ [ກ]ຄວາມ
ຕາຍ; ແລະ ຖ້າຫາກເຂົາປຸ້ນຈີ້ຄົນ ເຂົາ
ກໍຈະຖືກລົງໂທດ; ແລະ ຖ້າຫາກເຂົາລັກ
ເຂົາກໍຈະຖືກລົງໂທດ; ແລະ ຖ້າຫາກເຂົາ
ຫລິ້ນຊູ້ ເຂົາກໍຈະຖືກລົງໂທດຄືກັນ; ແທ້ຈິງ
ແລ້ວ, ເພາະຄວາມຊົ່ວຮ້າຍທັງໝົດນີ້ ພວກ
ເຂົາຈຶ່ງຖືກລົງໂທດ.
11 ເພາະວ່າກົດໝາຍມີຢູ່ວ່າ ມະນຸດຈະ
ຕ້ອງຖືກຕັດສິນຕາມຄວາມຜິດຂອງຕົນ.
ເຖິງຢ່າງໃດກໍຕາມ, ມັນກໍບໍ່ມີກົດໝາຍທີ່
ຈະຫ້າມຄວາມເຊື່ອຖືຂອງຄົນ; ສະນັ້ນ,
ມະນຸດຈະຖືກລົງໂທດຕາມຄວາມຜິດ ຊຶ່ງ
ພວກເຂົາໄດ້ເຮັດໄປເທົ່ານັ້ນ; ສະນັ້ນ ຄົນ
ທັງປວງຈຶ່ງຢູ່ໃນພື້ນຖານທີ່ [ກ]ສະເໝີພາບ
ກັນ.
12 ແລະ ຜູ້ຕໍ່ຕ້ານພຣະຄຣິດຜູ້ນີ້ມີຊື່ວ່າ
ໂຄຣິຫໍ (ແລະ ກົດບໍ່ມີອຳນາດກັບລາວໄດ້)
ລາວເລີ່ມສັ່ງສອນຜູ້ຄົນວ່າ ມັນຈະບໍ່ມີພຣະ
ຄຣິດ. ແລະ ລາວໄດ້ສັ່ງສອນຕາມວິທີນີ້,
ໂດຍກ່າວວ່າ:
13 ໂອ້ ພວກ ທ່ານ ຜູ້ ຖືກ ມັດ ໄວ້ ຢູ່ ໃຕ້
ຄວາມຫວັງອັນໂງ່ຈ້າ ແລະ ບໍ່ມີປະໂຫຍດ,
ເປັນຫຍັງພວກທ່ານຈຶ່ງແບກເອົາຄວາມໂງ່
ຈ້າໄວ້ກັບຕົນເອງ? ເປັນຫຍັງພວກທ່ານຈຶ່ງ
ຊອກຫາພຣະຄຣິດ? ເພາະວ່າບໍ່ມີຜູ້ໃດທີ່
ຈະຮູ້ຈັກສິ່ງທີ່ຈະມາເຖິງ.
14 ຈົ່ງເບິ່ງ, ສິ່ງເຫລົ່ານີ້ທີ່ພວກທ່ານເອີ້ນ
ວ່າຄຳທຳນາຍ, ຊຶ່ງພວກທ່ານກ່າວວ່າມັນ
ຖືກມອບຕໍ່ໆກັນມາໂດຍສາດສະດາຜູ້ບໍລິ
ສຸດ, ຈົ່ງເບິ່ງ, ມັນເປັນຮີດຄອງປະເພນີອັນ
ໂງ່ຈ້າຂອງບັນພະບຸລຸດຂອງພວກທ່ານ.
15 ພວກທ່ານຮູ້ຈັກຄວາມແນ່ນອນຂອງ
ມັນໄດ້ແນວໃດ? ຈົ່ງເບິ່ງ, ພວກທ່ານບໍ່ສາ
ມາດຮູ້ຈັກສິ່ງທີ່ພວກທ່ານບໍ່ [ກ]ເຫັນ; ສະນັ້ນ
ພວກທ່ານຈຶ່ງບໍ່ສາມາດຮູ້ໄດ້ວ່າ ມັນຈະມີ
ພຣະຄຣິດ.
16 ພວກທ່ານຫວັງ ແລະ ກ່າວວ່າພວກ
ທ່ານ ເຫັນ ການປົດບາບ ຂອງ ພວກທ່ານ
ເອງ. ແຕ່ຈົ່ງເບິ່ງ, ມັນເປັນຄວາມຄິດທີ່ບ້າໆ
ແລະ ຄວາມຜິດປົກກະຕິຂອງຈິດໃຈຂອງ
ພວກທ່ານ; ແລະ ເກີດຂຶ້ນຍ້ອນວ່າຮີດຄອງ
ປະເພນີຂອງບັນພະບຸລຸດຂອງພວກທ່ານ,
ຊຶ່ງນຳພາພວກທ່ານໄປເຊື່ອຖືໃນສິ່ງທີ່ເປັນ
ໄປບໍ່ໄດ້.
17 ແລະ ລາວໄດ້ເວົ້າກັບພວກເຂົາອີກ
ຫລາຍເລື່ອງໃນລັກສະນະດຽວກັນນີ້ໂດຍ
ບອກພວກເຂົາວ່າ ມັນຈະບໍ່ມີການຊົດໃຊ້
ແທນບາບຂອງມະນຸດເກີດຂຶ້ນຢ່າງເດັດ
ຂາດ, ແຕ່ວ່າມະນຸດແຕ່ລະຄົນເປັນຢູ່ໃນຊີ
ວິດນີ້ ຕາມການດຳເນີນຊີວິດຂອງຕົນເອງ;
ສະນັ້ນ ມະນຸດແຕ່ລະຄົນມີຄວາມຮຸ່ງເຮືອງ
ຕາມຄວາມສະຫລາດຂອງຕົນເອງ, ແລະ
ວ່າທຸກຄົນຊະນະຕາມກຳລັງຂອງຕົນເອງ;
ແລະ ແມ່ນຫຍັງກໍຕາມທີ່ຕົນເອງກະທຳໄປ
ນັ້ນ ຈະບໍ່ມີຄວາມຜິດເລີຍ.

8 *ກ* ຢຊ 24:15.
ຄນພ ອຳເພີໃຈ.
10 *ກ* ຄນພ ໂທດປະຫານຊີວິດ.
11 *ກ* ມຊຢ 29:32.
15 *ກ* ອທ 12:5–6.

18 ແລະ ລາວໄດ້ສັ່ງສອນພວກເຂົາແບບ
ນີ້, ແລະ ໄດ້ຊັກຈູງໃຈຫລາຍດວງໄປ, ເຮັດ
ໃຫ້ພວກເຂົາເບີກບານໃນຄວາມຊົ່ວຮ້າຍ
ຂອງພວກເຂົາ, ແທ້ຈິງແລ້ວ, ໄດ້ຊັກຈູງ
ພວກຜູ້ຍິງ ແລະ ພວກຜູ້ຊາຍເປັນຈຳນວນ
ຫລວງຫລາຍນຳອີກໃຫ້ທຳການໂສເພນີ—
ບອກພວກເຂົາວ່າ ເວລາຄົນຕາຍໄປ ມັນ
ເປັນທີ່ສຸດຂອງຊີວິດ.
19 ບັດ ນີ້ ຄົນ ຜູ້ ນີ້ ໄດ້ ໄປ ຫາ ແຜ່ນ ດິນ
ເຈີຊອນ ເພື່ອສັ່ງສອນເລື່ອງເຫລົ່ານີ້ໃນບັນ
ດາຜູ້ຄົນຂອງອຳໂມນນຳອີກ, ຊຶ່ງເຄີຍເປັນ
ຜູ້ຄົນຂອງຊາວເລມັນມາກ່ອນ.
20 ແ ຕ່ ຈົ່ງ ເ ບິ່ງ , ພວກ ເຂົາ ສະຫລາດ
ກວ່າຊາວນີໄຟເປັນຈຳນວນຫລວງຫລາຍ;
ເພາະວ່າພວກເຂົາໄດ້ຈັບ ແລະ ມັດລາວ,
ແລະ ໄດ້ພາລາວໄປຢູ່ຕໍ່ໜ້າອຳໂມນຜູ້ເປັນ
ມະຫາປະໂລຫິດປົກຄອງຜູ້ຄົນພວກນັ້ນ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ສັ່ງໃຫ້ລາວອອກຈາກແຜ່ນດິນໄປ. ແລະ
ລາວ ໄດ້ ເຂົ້າ ໄປ ໃນ ແຜ່ນ ດິນ ກີເດໂອນ
ແລະ ເລີ່ມສັ່ງສອນພວກເຂົານຳອີກ, ແລະ
ບ່ອນນີ້ລາວບໍ່ໄດ້ຮັບຄວາມສຳເລັດເລີຍ,
ເພາະວ່າລາວຖືກຈັບ ແລະ ມັດໄວ້, ແລະ
ຖືກພາໄປຢູ່ຕໍ່ໜ້າມະຫາປະໂລຫິດ ແລະ
ຫົວໜ້າຜູ້ຕັດສິນປົກຄອງແຜ່ນດິນ.
22 ແລະ ເຫດການ ໄດ້ບັງ ເກີດຂຶ້ນຄື
ມະຫາປະໂລຫິດໄດ້ຖາມລາວວ່າ: ເປັນ
ຫຍັງເຈົ້າຈຶ່ງທ່ຽວບິດເບືອນທາງຂອງພຣະ
ຜູ້ເປັນເຈົ້າ? ເປັນຫຍັງເຈົ້າຈຶ່ງສິດສອນຜູ້
ຄົນພວກນີ້ວ່າມັນຈະບໍ່ມີພຣະຄຣິດເພື່ອ
ຂັດຂວາງຄວາມຊື່ນຊົມຂອງພວກເຂົາ?
ເປັນຫຍັງເຈົ້າຈຶ່ງເວົ້າຂັດກັບການທຳນາຍ
ທັງໝົດຂອງສາດສະດາຜູ້ບໍລິສຸດ?
23 ບັດນີ້ຊື່ຂອງມະຫາປະໂລຫິດຜູ້ນັ້ນ
ຄື ກິດໂດນາ. ແລະ ໂຄຣິຫໍຕອບເພິ່ນວ່າ:
ຍ້ອນວ່າຂ້າພະເຈົ້າບໍ່ໄດ້ສິດສອນຮີດຄອງ
ປະເພນີອັນໂງ່ຈ້າຫລ້າຫລັງຂອງບັນພະບຸ
ລຸດຂອງທ່ານ, ແລະ ຍ້ອນວ່າຂ້າພະເຈົ້າ
ບໍ່ໄດ້ສິດສອນຜູ້ຄົນພວກນີ້ໃຫ້ຜູກມັດຕົວ
ເອງພາຍໃຕ້ພິທີການ ແລະ ການປະຕິບັດ
ອັນໂງ່ຈ້າຫລ້າຫລັງ ຊຶ່ງປະໂລຫິດສະໄໝ
ບູຮານກຳນົດໄວ້ ເພື່ອແຍ້ງຊີງເອົາອຳນາດ
ແລະ ສິດອຳນາດປົກຄອງຂອງພວກເຂົາ,
ເພື່ອເກັບກຳພວກເຂົາໄວ້ໃນຄວາມໂງ່ຈ້າ
ຫລ້າຫລັງ, ເພື່ອພວກເຂົາຈະບໍ່ໄດ້ເງີຍໜ້າ
ຂຶ້ນ, ແຕ່ຖືກນຳເອົາລົງໄປຕາມຄຳເວົ້າຂອງ
ທ່ານ.
24 ທ່ານ ເວົ້າ ວ່າ ຜູ້ ຄົນ ພວກ ນີ້ ເປັນ ຄົນ
ມີ ອິ ດສະ ລະ. ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ ກ່າວ
ວ່າ ພວກເຂົາຢູ່ໃນຄວາມເປັນທາດ. ທ່ານ
ກ່າວວ່າຄຳທຳນາຍເຫລົ່ານັ້ນຂອງສະໄໝ
ບູຮານເປັນຄວາມຈິງ. ຈົ່ງເບິ່ງ, ຂ້າພະເຈົ້າ
ກ່າວ ວ່າ ທ່ານບໍ່ ຮູ້ຈັກ ດອກວ່າ ມັນເປັນ
ຄວາມຈິງ.
25 ທ່ານເວົ້າວ່າ ຜູ້ຄົນພວກນີ້ເປັນຄົນທີ່
ມີຄວາມຜິດ ແລະ ຕົກໄປເພາະການລ່ວງ
ລະເມີດ ຂອງພໍ່ແມ່. ຈົ່ງເບິ່ງ, ຂ້າພະເຈົ້າ
ກ່າວວ່າລູກຈະບໍ່ມີຄວາມຜິດເພາະພໍ່ແມ່.
26 ແລະ ທ່ານເວົ້າອີກວ່າ ພຣະຄຣິດຈະ
ສະເດັດມາ. ແຕ່ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບທ່ານວ່າ ທ່ານບໍ່ຮູ້ຈັກດອກວ່າ ມັນຈະມີ
ພຣະຄຣິດ. ແລະ ທ່ານເວົ້າວ່າ ພຣະອົງຈະ
ຖືກປະຫານເພື່ອ [ກ]ບາບຂອງໂລກ—
27 ແລະ ທ່ານ ນຳ ພາ ຜູ້ຄົນພວກນີ້ໄປ
ຕາມຮີດຄອງປະເພນີອັນໂງ່ຈ້າຫລ້າຫລັງ
ຂອງບັນພະບຸລຸດຂອງທ່ານ, ແລະ ຕາມ
ຄວາມປາດຖະໜາຂອງທ່ານເອງ; ແລະ
ທ່ານເຮັດໃຫ້ພວກເຂົາຕ່ຳຕ້ອຍລົງ, ເຖິງ

26 *ກ* ອຊຢ 53:4–7.

ແມ່ນຄືກັບວ່າ ພວກເຂົາຢູ່ໃນຄວາມເປັນ
ທາດ, ເພື່ອທ່ານຈະອີ່ມໜຳສຳລານດ້ວຍ
ແຮງງານຈາກມືຂອງພວກເຂົາ, ເພື່ອພວກ
ເຂົາຈະເງີຍໜ້າຂຶ້ນບໍ່ໄດ້ດ້ວຍຄວາມອັງ
ອາດ, ແລະ ເພື່ອພວກເຂົາຈະບໍ່ກ້າຊື່ນຊົມ
ໃນສິດ ແລະ ສິດທິພິເສດຂອງພວກເຂົາ.
28 ແທ້ຈິງແລ້ວ, ພວກເຂົາບໍ່ກ້າໃຊ້ສິ່ງ
ທີ່ເປັນຂອງຕົນເອງ ໂດຍຢ້ານວ່າຈະເຮັດ
ໃຫ້ປະໂລຫິດຂອງພວກເຂົາບໍ່ພໍໃຈ, ພວກ
ເຂົາໄດ້ເປັນແອກໃຫ້ປະໂລຫິດຕາມຄວາມ
ປາດຖະໜາຂອງປະໂລຫິດ, ແລະ ນຳພາ
ພວກເຂົາໃຫ້ເຊື່ອຖືຕາມຮີດຄອງປະເພນີ
ຂອງຕົນ, ຕາມຄວາມໄຝ່ຝັນຂອງຕົນ ແລະ
ຕາມອາລົມຂອງຕົນ ແລະ ພາບນິມິດນັ້ນ,
ແລະ ຄວາມລຶກລັບທີ່ເຮັດຂຶ້ນມາຂອງຕົນ,
ຖ້າຫາກພວກເຂົາບໍ່ເຮັດຕາມຄຳເວົ້າຂອງ
ຕົນ, ພວກເຂົາກໍເຮັດໃຫ້ຜູ້ໃດຜູ້ໜຶ່ງ ຊຶ່ງບໍ່
ເປັນທີ່ຮູ້ຈັກຂຸ່ນເຄືອງ ຜູ້ຊຶ່ງພວກເຂົາກ່າວ
ວ່າ ເປັນພຣະເຈົ້າ—ຊຶ່ງເປັນຜູ້ທີ່ບໍ່ເຄີຍ
ຮູ້ ແລະ ບໍ່ເຄີຍເຫັນ, ແລະ ເປັນຜູ້ທີ່ບໍ່ເຄີຍ
ເປັນມາກ່ອນ ແລະ ຈະບໍ່ມີວັນເປັນໄປໄດ້.
29 ບັດນີ້ເວລາມະຫາປະໂລຫິດ ແລະ
ຫົວໜ້າຜູ້ຕັດສິນເຫັນຄວາມແຂງກະດ້າງ
ຂອງໃຈລາວ, ແທ້ຈິງແລ້ວ, ເມື່ອພວກເພິ່ນ
ເຫັນລາວໝິ່ນປະໝາດພຣະເຈົ້າ, ພວກ
ເພິ່ນຈຶ່ງບໍ່ຍອມຕອບຄຳເວົ້າຂອງລາວ; ແຕ່
ພວກເພິ່ນສັ່ງໃຫ້ມັດລາວ; ແລະ ພວກເພິ່ນ
ໄດ້ສົ່ງລາວໄປຫາເຈົ້າໜ້າທີ່ ແລະ ສົ່ງລາວ
ຕໍ່ໄປຫາແຜ່ນດິນເຊຣາເຮັມລາເພື່ອຈະໄດ້
ນຳໄປຢູ່ຕໍ່ໜ້າຂອງແອວມາ ແລະ ຫົວໜ້າຜູ້
ຕັດສິນຊຶ່ງເປັນຜູ້ປົກຄອງແຜ່ນດິນທັງໝົດ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາລາວຖືກນຳມາຢູ່ຕໍ່ໜ້າແອວມາ ແລະ
ຫົວໜ້າຜູ້ຕັດສິນ, ລາວກໍເຮັດແບບດຽວກັນ
ກັບທີ່ລາວໄດ້ເຮັດໃນແຜ່ນດິນກີເດໂອນ
ນັ້ນ; ແທ້ຈິງແລ້ວ, ລາວໄດ້ [ກ]ໝິ່ນປະໝາດ
ຕື່ມອີກ.
31 ແລະ ລາວໄດ້ໃຊ້ຄຳເວົ້າທີ່ [ກ]ຮຸນແຮງ
ຫລາຍຂຶ້ນຕໍ່ໜ້າແອວມາ, ແລະ ໝິ່ນປະ
ໝາດພວກປະໂລຫິດ ແລະ ຜູ້ສິດສອນ
ໂດຍກ່າວຫາວ່າພວກເພິ່ນໄດ້ຊັກນຳຜູ້ຄົນ
ໃຫ້ເຮັດຕາມຮີດຄອງປະເພນີອັນໂງ່ຈ້າ
ຫລ້າຫລັງຂອງບັນພະບຸລຸດຂອງຕົນ ເພື່ອ
ເຫັນແກ່ຄວາມອີ່ມໜຳສຳລານຈາກແຮງ
ງານຂອງປະຊາຊົນ.
32 ບັດນີ້ແອວມາໄດ້ກ່າວກັບລາວວ່າ:
ເຈົ້າຮູ້ຢູ່ແລ້ວວ່າ ພວກເຮົາບໍ່ໄດ້ອີ່ມໜຳ
ສຳລານຈາກແຮງງານຂອງຜູ້ຄົນພວກ
ນີ້; ເພາະຈົ່ງເບິ່ງ ຂ້າພະເຈົ້າໄດ້ອອກແຮງ
ງານຕັ້ງແຕ່ການເລີ່ມຕົ້ນຂອງການປົກຄອງ
ຂອງຜູ້ຕັດສິນມາຈົນເຖິງບັດນີ້ດ້ວຍມືຂອງ
ຂ້າພະເຈົ້າເອງເພື່ອຫາລ້ຽງຕົນເອງ, ທັງໆ
ທີ່ຂ້າພະເຈົ້າໄດ້ເດີນທາງຫລາຍເທື່ອໄປ
ມາທົ່ວແຜ່ນດິນເພື່ອປະກາດພຣະຄຳຂອງ
ພຣະເຈົ້າແກ່ຜູ້ຄົນຂອງຂ້າພະເຈົ້າ.
33 ແລະ ທັງໆທີ່ມັນເປັນວຽກງານຢ່າງ
ຫລວງຫລາຍ ຊຶ່ງຂ້າພະເຈົ້າໄດ້ເຮັດໄປໃນ
ສາດສະໜາຈັກ, ຂ້າພະເຈົ້າກໍບໍ່ໄດ້ຮັບພຽງ
ແຕ່ໜຶ່ງ [ກ]ຊີໄນເພື່ອແຮງງານຂອງຂ້າພະ
ເຈົ້າເລີຍ; ທັງພີ່ນ້ອງຂອງຂ້າພະເຈົ້າກໍບໍ່ໄດ້
ຮັບຫຍັງເລີຍນອກຈາກເວລາທີ່ຢູ່ໃນບັນ
ລັງຕັດສິນ; ແລະ ເມື່ອນັ້ນພວກເຮົາຈະໄດ້
ຮັບຕາມກົດໝາຍສຳລັບເວລາຂອງພວກ
ເຮົາເທົ່ານັ້ນ.
34 ແລະ ບັດນີ້, ຖ້າຫາກພວກເຮົາບໍ່ໄດ້
ຮັບສິ່ງຕອບແທນແຮງງານຂອງພວກເຮົາ
ໃນສາດສະໜາຈັກແລ້ວ, ມັນຈະເປັນປະ
ໂຫຍດອັນໃດແກ່ພວກເຮົາທີ່ຈະເຮັດການ

30 *ກ* ຄມພ ໝິ່ນປະໝາດ,
ການໝິ່ນປະໝາດ.
31 *ກ* ຣລມ 13:22.
33 *ກ* ແອວ 11:3.

ໃນສາດສະໜາຈັກນອກຈາກເພື່ອປະກາດ
ຄວາມຈິງ ເພື່ອພວກເຮົາຈະໄດ້ມີຄວາມ
ປິຕິຍິນດີໃນ *ກ*ຄວາມສຸກຂອງພີ່ນ້ອງຂອງ
ພວກເຮົາ?
35 ແລ້ວເປັນຫຍັງເຈົ້າຈຶ່ງເວົ້າວ່າ ພວກ
ເຮົາສັ່ງສອນຜູ້ຄົນພວກນີ້ເພື່ອຫາຜົນປະ
ໂຫຍດ, ໃນເມື່ອຕົວເຈົ້າເອງກໍຮູ້ຈັກຢູ່ແລ້ວ
ວ່າ ພວກເຮົາບໍ່ໄດ້ຮັບຜົນປະໂຫຍດອັນໃດ
ເລີຍ? ແລະ ບັດນີ້, ເຈົ້າເຊື່ອບໍວ່າ ພວກເຮົາ
ຫລອກລວງຜູ້ຄົນພວກນີ້ ທີ່ເຮັດໃຫ້ພວກ
ເຂົາມີຄວາມສຸກເຊັ່ນນີ້ໃນໃຈຂອງພວກ
ເຂົາ?
36 ແລະ ໂຄຣິຫໍຕອບເພິ່ນວ່າ, ຖືກແລ້ວ.
37 ແລະ ແລ້ວແອວມາຖາມລາວ ວ່າ:
ເຈົ້າເຊື່ອບໍວ່າ ມັນມີພຣະເຈົ້າ?
38 ແລະ ລາວຕອບວ່າ, ບໍ່ເຊື່ອ.
39 ບັດນີ້ແອວມາເວົ້າກັບລາວວ່າ: ເຈົ້າ
ຈະປະຕິເສດອີກບໍວ່າ ມັນບໍ່ມີພຣະເຈົ້າ,
ແລະ ປະຕິເສດພຣະຄຣິດອີກບໍ? ເພາະຈົ່ງ
ເບິ່ງ, ຂ້າພະເຈົ້າກ່າວກັບເຈົ້າວ່າ, ຂ້າພະ
ເຈົ້າຮູ້ຈັກວ່າ ມັນມີພຣະເຈົ້າ ແລະ ວ່າພຣະ
ຄຣິດຈະສະເດັດມາ.
40 ແລະ ບັດນີ້ເຈົ້າມີຫລັກຖານແນວໃດ
ທີ່ວ່າມັນບໍ່ມີ *ກ*ພຣະເຈົ້າ, ຫລື ວ່າພຣະຄຣິດ
ຈະບໍ່ສະເດັດມາ? ຂ້າພະເຈົ້າກ່າວວ່າ ເຈົ້າ
ບໍ່ມີເລີຍ, ນອກຈາກຄຳເວົ້າຂອງເຈົ້າເທົ່າ
ນັ້ນ.
41 ເພາະຈົ່ງເບິ່ງ, ຂ້າພະເຈົ້າມີທຸກສິ່ງ
ທຸກຢ່າງທີ່ເປັນ *ກ*ປະຈັກພະຍານ ວ່າສິ່ງ
ເຫລົ່ານີ້ເປັນຄວາມຈິງ; ແລະ ເຈົ້າກໍມີທຸກ
ສິ່ງທຸກຢ່າງທີ່ຈະໃຫ້ເປັນປະຈັກພະຍານ
ວ່າ ສິ່ງເຫລົ່ານີ້ເປັນຄວາມຈິງ; ແລະ ເຈົ້າ
ຈະປະຕິເສດມັນບໍ? ເຈົ້າເຊື່ອບໍວ່າ ສິ່ງ
ເຫລົ່ານີ້ເປັນຄວາມຈິງ?
42 ຈົ່ງເບິ່ງ, ຂ້າພະເຈົ້າຮູ້ວ່າ ເຈົ້າເຊື່ອ,
ແຕ່ເຈົ້າຖືກຄອບງຳດ້ວຍວິນຍານທີ່ຕົວະ,
ແລະ ເຈົ້າບໍ່ເອົາໃຈໃສ່ຕໍ່ພຣະວິນຍານ
ຂອງພຣະເຈົ້າ ຈົນວ່າມັນບໍ່ມີບ່ອນຢູ່ໃນຕົວ
ເຈົ້າ; ແຕ່ເວລານີ້ມານມີອຳນາດເໜືອເຈົ້າ,
ແລະ ມານໄດ້ພາເຈົ້າໄປເຮັດກົນອຸບາຍຢູ່
ທົ່ວທິບ, ເພື່ອມັນຈະໄດ້ທຳລາຍລູກຫລານ
ຂອງພຣະເຈົ້າ.
43 ແລະ ບັດ ນີ້ ໂຄ ຣິ ຫໍ ໄດ້ກ່າວ ກັບ
ແອວມາ ວ່າ: ຖ້າຫາກທ່ານຈະສະແດງ
*ກ*ເຄື່ອງໝາຍແກ່ຂ້າພະເຈົ້າ, ບາງທີຂ້າພະ
ເຈົ້າອາດຈະຍອມຮັບວ່າມັນມີພຣະເຈົ້າ,
ແທ້ຈິງແລ້ວ, ຈົ່ງສະແດງແກ່ຂ້າພະເຈົ້າວ່າ
ພຣະອົງມີອຳນາດ ແລະ ເມື່ອນັ້ນຂ້າພະ
ເຈົ້າຈະຍອມຮັບຄຳເວົ້າຂອງທ່ານວ່າເປັນ
ຄວາມຈິງ.
44 ແຕ່ ແອວມາ ກ່າວ ກັບ ລາວ ວ່າ: ເຈົ້າ
ມີເຄື່ອງໝາຍຢູ່ພຽງພໍແລ້ວ; ເຈົ້າຈະທົດ
ລອງພຣະເຈົ້າຂອງເຈົ້າບໍ? ເຈົ້າຈະເວົ້າວ່າ
ຈົ່ງສະແດງເຄື່ອງໝາຍແກ່ຂ້າພະເຈົ້າຢູ່ບໍ
ໃນເມື່ອເຈົ້າເອງມີປະຈັກພະຍານເຫລົ່ານີ້
*ກ*ທັງໝົດຈາກພີ່ນ້ອງຂອງເຈົ້າ, ແລະ ຈາກ
ສາດສະດາຜູ້ບໍລິສຸດທັງໝົດນຳອີກ? ພຣະ
ຄຳພີວາງຢູ່ຕໍ່ໜ້າຂອງເຈົ້າ, ແທ້ຈິງແລ້ວ,
ແລະ *ຂ*ທຸກສິ່ງທຸກຢ່າງຊີ້ໃຫ້ເຫັນວ່າ ມັນມີ
ພຣະເຈົ້າ; ແທ້ຈິງແລ້ວ, ເຖິງແມ່ນ *ຄ*ແຜ່ນ
ດິນໂລກ ແລະ ທຸກສິ່ງທຸກຢ່າງທີ່ມີໃນ
ພື້ນແຜ່ນດິນນີ້, ແທ້ຈິງແລ້ວ, ແລະ *ງ*ການ
ເຄື່ອນໄຫວຂອງມັນ, ແທ້ຈິງແລ້ວ, ແລະ
ພ້ອມທັງ *ຈ*ດາວພະເຄາະທັງໝົດນຳອີກ ຊຶ່ງ

34 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
40 *ກ* ພສສ 14:1.
41 *ກ* ຄມພ ພະຍານ.
43 *ກ* ຢຄ 7:13–21; ຄພ 46:8–9. ຄມພ ເຄື່ອງໝາຍ.
44 *ກ* ມຊຢ 13:33–34.
*ຂ* ພສສ 19:1; ຄພ 88:47.
*ຄ* ໂຢບ 12:7–10.
*ງ* ຮລມ 12:11–15.
*ຈ* ມຊ 6:63.

ເຄື່ອນໄຫວໃນລັກສະນະຂອງມັນ ຊຶ່ງເປັນ
ພະຍານວ່າມີພຣະຜູ້ສ້າງສູງສຸດ.
45 ແລ້ວເຈົ້າຍັງໄປທົ່ວທີບເພື່ອຊັກນຳ
ໃຈຂອງຜູ້ຄົນພວກນີ້ໄປ, ໃຫ້ຖ້ອຍຄຳແກ່
ພວກເຂົາວ່າ ບໍ່ມີພຣະເຈົ້າອີກບໍ? ແລະ
ເຈົ້າຍັງປະຕິເສດພະຍານທັງໝົດເຫລົ່ານີ້
ບໍ? ແລະ ລາວຕອບວ່າ: ແທ້ຈິງແລ້ວ, ຂ້າ
ພະເຈົ້າຈະປະຕິເສດເວັ້ນເສຍແຕ່ທ່ານຈະ
ສະແດງເຄື່ອງໝາຍແກ່ຂ້າພະເຈົ້າເທົ່ານັ້ນ.
46 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ແອວມາເວົ້າກັບລາວວ່າ: ຈົ່ງເບິ່ງ, ຂ້າພະ
ເຈົ້າໂສກເສົ້າຍ້ອນວ່າ ຄວາມແຂງກະດ້າງ
ຂອງໃຈເຈົ້າ, ແທ້ຈິງແລ້ວ, ຄືເຈົ້າຍັງຈະຕໍ່
ຕ້ານວິນຍານແຫ່ງຄວາມຈິງຢູ່ຈົນວ່າຈິດ
ວິນຍານຂອງເຈົ້າຖືກທຳລາຍໄປ.
47 ແຕ່ຈົ່ງເບິ່ງ, ມັນເປັນການ [ກ]ດີກວ່າ
ທີ່ຈິດວິນຍານຂອງເຈົ້າຈະຖືກທຳລາຍໄປ
ແທນທີ່ເຈົ້າຈະເປັນຄົນນຳພາຈິດວິນຍານ
ຫລາຍດວງລົງໄປສູ່ຄວາມພິນາດດ້ວຍ
ການເວົ້າຕົວະ ແລະ ດ້ວຍຄວາມຍົກຍ້ອງ
ຂອງເຈົ້າ; ສະນັ້ນ ຖ້າຫາກເຈົ້າປະຕິເສດ
ອີກ, ຈົ່ງເບິ່ງ ພຣະເຈົ້າຈະລົງໂທດເຈົ້າ,
ເພື່ອເຈົ້າຈະກາຍເປັນຄົນໄບ້, ເພື່ອເຈົ້າຈະ
ເປີດປາກຂອງຕົນບໍ່ໄດ້ອີກເລີຍ, ເພື່ອເຈົ້າ
ຈະບໍ່ໄດ້ຫລອກລວງຜູ້ຄົນພວກນີ້ອີກຕໍ່ໄປ.
48 ບັດນີ້ໂຄຣິຫໍໄດ້ເວົ້າກັບເພິ່ນວ່າ: ຂ້າ
ພະເຈົ້າບໍ່ໄດ້ປະຕິເສດການດຳລົງຢູ່ຂອງ
ພຣະເຈົ້າ, ແຕ່ຂ້າພະເຈົ້າບໍ່ເຊື່ອວ່າ ມັນມີ
ພຣະເຈົ້າ; ແລະ ຂ້າພະເຈົ້າເວົ້າອີກວ່າ,
ທ່ານກໍບໍ່ຮູ້ຄືກັນວ່າມີພຣະເຈົ້າ; ແລະ ຖ້າ
ຫາກທ່ານບໍ່ສະແດງເຄື່ອງໝາຍແກ່ຂ້າພະ
ເຈົ້າ, ຂ້າພະເຈົ້າຈະບໍ່ເຊື່ອ.
49 ແລະ ບັດນີ້ແອວມາໄດ້ເວົ້າກັບລາວ
ວ່າ: ສິ່ງທີ່ຂ້າພະເຈົ້າຈະໃຫ້ແກ່ເຈົ້າເພື່ອ
ເປັນເຄື່ອງໝາຍຄື ເຈົ້າຈະເກີດເປັນ [ກ]ຄົນ
ໄບ້ຕາມຄຳເວົ້າຂອງຂ້າພະເຈົ້າ; ແລະ ຂ້າ
ພະເຈົ້າກ່າວໃນພຣະນາມຂອງພຣະເຈົ້າ,
ເຈົ້າຈະເກີດເປັນຄົນໄບ້ເພື່ອເຈົ້າຈະເວົ້າບໍ່
ໄດ້ອີກຕໍ່ໄປ.
50 ບັດນີ້ເມື່ອແອວມາໄດ້ກ່າວຂໍ້ຄວາມ
ນີ້ແລ້ວ ໂຄຣິຫໍກໍເກີດເປັນຄົນໄບ້, ຈົນ
ວ່າລາວເປັ່ງສຽງບໍ່ໄດ້ຕາມຄຳເວົ້າຂອງ
ແອວມາ.
51 ແລະ ບັດນີ້ເວລາຫົວໜ້າຜູ້ຕັດສິນ
ເຫັນເຫດການນີ້ແລ້ວ, ເພິ່ນຈຶ່ງເດ່ມືຂອງ
ເພິ່ນອອກໄປຂຽນໜັງສືໃຫ້ໂຄຣິຫໍ, ມີ
ຄວາມວ່າ: ເຈົ້າຍອມຮັບເຖິງອຳນາດຂອງ
ພຣະເຈົ້າແລ້ວບໍ? ແລ້ວເຈົ້າຈະໃຫ້ແອວມາ
ສະແດງເຄື່ອງໝາຍນີ້ກັບຜູ້ໃດອີກ? ເຈົ້າ
ຢາກໃຫ້ເພິ່ນເຮັດໃຫ້ຜູ້ອື່ນຕ້ອງທຸກທໍລະ
ມານນຳອີກບໍ ເພື່ອການສະແດງໃຫ້ແກ່
ເຈົ້າເຫັນ? ຈົ່ງເບິ່ງ, ເພິ່ນໄດ້ສະແດງເຄື່ອງ
ໝາຍແກ່ເຈົ້າແລ້ວ; ແລະ ບັດນີ້ເຈົ້າຈະໂຕ້
ຖຽງຕໍ່ໄປອີກບໍ?
52 ແລະ ໂຄຣິຫໍໄດ້ເດ່ມືຂອງລາວອອກ
ໄປ, ຂຽນວ່າ: ຂ້າພະເຈົ້າຮູ້ຈັກແລ້ວວ່າ ຂ້າ
ພະເຈົ້າເປັນຄົນໄບ້ເພາະຂ້າພະເຈົ້າເວົ້າ
ບໍ່ໄດ້; ແລະ ຂ້າພະເຈົ້າຮູ້ຈັກແລ້ວວ່າ ບໍ່ມີ
ສິ່ງໃດອີກແລ້ວນອກຈາກຈະເປັນອຳນາດ
ຂອງພຣະເຈົ້າທີ່ນຳເອົາສິ່ງນີ້ມາສູ່ຂ້າພະ
ເຈົ້າ; ແທ້ຈິງແລ້ວ, ແລະ ຂ້າພະເຈົ້າ [ກ]ຮູ້ຢູ່
ຕະຫລອດວ່າ ມັນມີພຣະເຈົ້າ.
53 ແຕ່ຈົ່ງເບິ່ງ, ມານໄດ້ [ກ]ຫລອກລວງຂ້າ
ພະເຈົ້າ; ເພາະມັນໄດ້ມາ [ຂ]ປະກົດຕໍ່ຂ້າພະ
ເຈົ້າໃນລັກສະນະຂອງທູດ ແລະ ເວົ້າກັບ
ຂ້າພະເຈົ້າວ່າ: ຈົ່ງໄປເອີ້ນຜູ້ຄົນເຫລົ່ານີ້

47 *ກ* 1 ນຟ 4:13.
49 *ກ* 2 ຂຄ 13:20.
52 *ກ* ແອວ 30:42.
53 *ກ* ຢຄ 7:14.
*ຂ* 2 ກຣທ 11:14; 2 ນຟ 9:9.

ກັບຄືນມາ ເພາະວ່າພວກເຂົາທັງໝົດຫລົງ
ທາງ ຕາມພຣະເຈົ້າ ທີ່ບໍ່ຮູ້ຈັກ. ແລະ ມັນໄດ້
ເວົ້າກັບຂ້າພະເຈົ້າວ່າ: [ຄ]ບໍ່ມີພຣະເຈົ້າ; ແທ້
ຈິງແລ້ວ, ແລະ ມັນໄດ້ສິດສອນຂ້າພະເຈົ້າ
ເຖິງສິ່ງທີ່ຂ້າພະເຈົ້າຄວນເວົ້າ. ແລະ ຂ້າ
ພະເຈົ້າໄດ້ສິດສອນຄຳເວົ້າຂອງມັນ; ແລະ
ຂ້າພະເຈົ້າໄດ້ເຮັດໄປ ເພາະວ່າມັນເປັນ
ທີ່ພໍໃຈໃຫ້ແກ່ຈິດໃຈແຫ່ງ [ງ]ການມະລົນ;
ແລະ ຂ້າພະເຈົ້າໄດ້ສິດສອນມັນຈົນໄດ້
ຮັບຄວາມສຳເລັດຢ່າງຫລວງຫລາຍ, ເຖິງ
ຂະໜາດທີ່ຂ້າພະເຈົ້າເຊື່ອແທ້ວ່າ ມັນເປັນ
ຄວາມຈິງ; ແລະ ດ້ວຍເຫດນີ້ ຂ້າພະເຈົ້າ
ຈຶ່ງຄັດຄ້ານຄວາມຈິງ, ຈົນວ່າຂ້າພະເຈົ້າ
ໄດ້ນຳເອົາການສາບແຊ່ງອັນຍິ່ງໃຫຍ່ນີ້ມາ
ສູ່ຂ້າພະເຈົ້າເອງ.
54 ບັດນີ້ເມື່ອລາວກ່າວເລື່ອງນີ້ແລ້ວ,
ລາວໄດ້ວິງວອນແອວມາໃຫ້ອະທິຖານຫາ
ພຣະເຈົ້າເພື່ອເອົາການສາບແຊ່ງອອກໄປ
ຈາກລາວ.
55 ແຕ່ແອວມາເວົ້າກັບລາວວ່າ: ຖ້າຫາກ
ພຣະອົງເອົາການສາບແຊ່ງນີ້ອອກໄປຈາກ
ເຈົ້າແລ້ວ ເຈົ້າກໍຈະຊັກຊວນໃຈຂອງຜູ້ຄົນ
ພວກນີ້ໄປນຳອີກ; ສະນັ້ນ, ມັນຈຶ່ງຈະຢູ່ກັບ
ເຈົ້າ ເພາະນີ້ເປັນພຣະປະສົງຂອງພຣະຜູ້
ເປັນເຈົ້າ.
56 ແລະ ເຫດການໄດ້ບັງເກີດຂຶ້ນຄື
ການສາບແຊ່ງນັ້ນບໍ່ໄດ້ຖືກເອົາໄປຈາກໂຄ
ຣິຫໍ; ແຕ່ລາວໄດ້ຖືກຂັບໄລ່ອອກໄປ ແລະ
ໄດ້ທ່ອງທ່ຽວໄປຈາກເຮືອນຫລັງໜຶ່ງຫາ
ເຮືອນອີກຫລັງໜຶ່ງເພື່ອຂໍທານກິນ.
57 ແລະ ບັດນີ້ຄວາມຮູ້ກ່ຽວກັບສິ່ງທີ່ເກີດ
ຂຶ້ນກັບໂຄຣິຫໍຖືກປະກາດໄປຕະຫລອດ
ທົ່ວແຜ່ນດິນໂດຍທັນທີ; ແທ້ຈິງແລ້ວ, ຫົວ
ໜ້າຜູ້ຕັດສິນໄດ້ສົ່ງຂ່າວສານອອກໄປຫາ
ຜູ້ຄົນທັງໝົດໃນແຜ່ນດິນ, ປະກາດແກ່ຜູ້ທີ່
ເຊື່ອຖືໃນຄຳເວົ້າຂອງໂຄຣິຫໍວ່າ ພວກເຂົາ
ຕ້ອງກັບໃຈໂດຍໄວ, ຖ້າບໍ່ດັ່ງນັ້ນ ການພິ
ພາກສາແບບດຽວກັນຈະມາສູ່ພວກເຂົາ.
58 ແລະ ເຫດການໄດ້ບັງເກີດຂຶ້ນຄື ທຸກ
ຄົນໄດ້ຍອມຮັບເຖິງຄວາມຊົ່ວຮ້າຍຂອງ
ໂຄຣິຫໍ. ສະນັ້ນ ພວກເຂົາຈຶ່ງໄດ້ປ່ຽນໃຈ
ເຫລື້ອມໃສໃນພຣະຜູ້ເປັນເຈົ້າອີກ; ແລະ ນີ້
ເຮັດໃຫ້ຄວາມຊົ່ວຮ້າຍຕາມແບບຢ່າງຂອງ
ໂຄຣິຫໍສິ້ນສຸດລົງ ແລະ ໂຄຣິຫໍໄດ້ທ່ອງ
ທ່ຽວໄປມາຈາກເຮືອນຫລັງໜຶ່ງຫາເຮືອນ
ອີກຫລັງໜຶ່ງເພື່ອຂໍທານລ້ຽງຕົນເອງ.
59 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ລາວເຂົ້າໄປຫາບັນດາຜູ້ຄົນ, ແທ້
ຈິງແລ້ວ, ໄປຫາຜູ້ຄົນພວກໜຶ່ງທີ່ແຍກຕົວ
ອອກຈາກຊາວນີໄຟ ແລະ ເອີ້ນຕົວເອງວ່າ
ຊາວໂຊຣຳ, ໂດຍມີຄົນຜູ້ໜຶ່ງຊື່ວ່າ ໂຊຣຳ
ນຳພາໄປ—ແລະ ໃນຂະນະທີ່ລາວເຂົ້າໄປ
ຫາບັນດາຜູ້ຄົນ, ຈົ່ງເບິ່ງ, ລາວໄດ້ຖືກຢຽບ
ຍ່ຳຈົນເຖິງແກ່ຄວາມຕາຍ.
60 ແລະ ພວກເຮົາຈຶ່ງເຫັນບ່ອນຈົບຂອງ
ລາວ ຜູ້ທີ່ບິດເບືອນທາງຂອງພຣະຜູ້ເປັນ
ເຈົ້າດັ່ງນັ້ນ; ແລະ ພວກເຮົາຈຶ່ງເຫັນວ່າ
[ກ]ມານຈະບໍ່ [ຂ]ຄ້ຳຊູລູກຫລານຂອງມັນໃນ
ວັນສຸດທ້າຍດັ່ງນັ້ນ, ແຕ່ມັນຈະລາກພວກ
ເຂົາລົງໄປ [ຄ]ນະລົກຢ່າງວ່ອງໄວ.

## ບົດທີ 31

*ແອວມານຳພາການເຜີຍແຜ່ເພື່ອກູ້ຊາວໂຊຣຳທີ່ຫລົງຜິດກັບຄືນມາ—ຊາວໂຊຣຳປະຕິເສດພຣະຄຣິດ, ເຊື່ອໃນການເລືອກ ແລະ ອະທິຖານໃນທາງທີ່ບໍ່ຖືກຕ້ອງ—ຜູ້ສອນສາດສະໜາເຕັມໄປດ້ວຍພຣະວິນ*

53 ຄ ພສສ 10:4.
ງ ຄນພ ການມະລົນ.
60 ກ ຄນພ ມານ.
ຂ ແອວ 3:26–27; 5:41–42;
ຄພ 29:45.
ຄ ຄນພ ນະລົກ.

*ຍານສັກສິດ—ຄວາມທຸກຂອງພວກເພິ່ນຖືກກືນເຂົ້າໄປໃນຄວາມຊື່ນຊົມຂອງພຣະຄຣິດ. ປະມານ 74 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກໂຄຣິຫໍໄດ້ຕາຍໄປແລ້ວ, ແອວມາໂດຍທີ່ໄດ້ຮັບຂ່າວວ່າ ຊາວໂຊຣຳກຳລັງບິດເບືອນທາງຂອງພຣະຜູ້ເປັນເຈົ້າ, ແລະ ວ່າໂຊຣຳຊຶ່ງເປັນຜູ້ນຳຂອງພວກເຂົາກຳລັງຊັກຈູງໃຈຂອງຜູ້ຄົນໃຫ້ [ກ]ກາບໄຫວ້ [ຂ]ຮູບບູຊາທີ່ເວົ້າບໍ່ໄດ້, ໃຈຂອງເພິ່ນກໍເລີ່ມ [ຄ]ໂສກເສົ້າອີກເພາະຄວາມຊົ່ວຮ້າຍຂອງຜູ້ຄົນ.

2 ເພາະວ່າມັນເປັນສາເຫດຂອງ [ກ]ຄວາມເສົ້າສະຫລົດໃຈຫລາຍທີ່ສຸດແກ່ແອວມາທີ່ໄດ້ຮູ້ຈັກເຖິງຄວາມຊົ່ວຮ້າຍໃນບັນດາຜູ້ຄົນຂອງເພິ່ນ; ສະນັ້ນ ໃຈຂອງເພິ່ນຈຶ່ງເສົ້າສະຫລົດຫລາຍທີ່ສຸດເພາະການແບ່ງແຍກຂອງຊາວໂຊຣຳທີ່ອອກໄປຈາກຊາວນີໄຟ.

3 ບັດນີ້ຊາວໂຊຣຳໄດ້ມາເຕົ້າໂຮມກັນຢູ່ໃນແຜ່ນດິນຊຶ່ງພວກເຂົາເອີ້ນວ່າ ອານທິໂອນຳ, ຊຶ່ງຢູ່ທາງຕາເວັນອອກຂອງແຜ່ນດິນເຊຣາເຮັມລາ, ຊຶ່ງຢູ່ໃກ້ຊາຍແດນໃກ້ຝັ່ງທະເລ, ຊຶ່ງຢູ່ທາງໃຕ້ຂອງແຜ່ນດິນເຈີຊອນ, ຊຶ່ງຊາຍແດນຂອງມັນຕິດກັບຖິ່ນແຫ້ງແລ້ງກັນດານທາງໃຕ້, ຊຶ່ງເປັນຖິ່ນແຫ້ງແລ້ງກັນດານທີ່ເຕັມໄປດ້ວຍຊາວເລມັນ.

4 ບັດນີ້ຊາວນີໄຟຢ້ານທີ່ສຸດວ່າ ຊາວໂຊຣຳ ຈະເຂົ້າໄປຕິດຕໍ່ກັບຊາວເລມັນ, ແລະ ວ່າມັນອາດຈະເປັນທາງແຫ່ງການສູນເສຍອັນໃຫຍ່ຫລວງແກ່ຊາວນີໄຟ.

5 ແລະ ບັດນີ້, ເມື່ອ [ກ]ການສັ່ງສອນ [ຂ]ພຣະຄຳອັນຍິ່ງໃຫຍ່ນີ້ໄດ້ [ຄ]ນຳພາຜູ້ຄົນມາເຮັດໃນສິ່ງທີ່ຖືກຕ້ອງແລ້ວ—ແທ້ຈິງແລ້ວ, ມັນໄດ້ໃຫ້ຜົນທີ່ມີອຳນາດແກ່ຈິດໃຈຂອງຜູ້ຄົນຍິ່ງກວ່າດາບ, ຫລື ເໜືອກວ່າສິ່ງໃດໆທີ່ໄດ້ເກີດຂຶ້ນກັບພວກເຂົາ—ສະນັ້ນ ແອວມາຈຶ່ງຄິດວ່າ ມັນສົມຄວນແລ້ວ ທີ່ພວກເພິ່ນຈະທົດລອງຄຸນນະທຳແຫ່ງພຣະຄຳຂອງພຣະເຈົ້າ.

6 ສະນັ້ນ ເພິ່ນຈຶ່ງໄດ້ພາອຳໂມນ, ແລະ ອາໂຣນ, ແລະ ອອມເນີໄປນຳ; ແລະ ເພິ່ນໄດ້ປະຮີມໄນໄວ້ກັບສາດສະໜາຈັກໃນເຊຣາເຮັມລາ; ແຕ່ເພິ່ນໄດ້ພາສາມຄົນນີ້, ແລະ ພ້ອມທັງແອມມິວເລັກ ແລະ ຊີເອສຣອມ ຜູ້ທີ່ມາຈາກມີເລັກ; ແລະ ລູກຊາຍຂອງເພິ່ນສອງຄົນໄປນຳ.

7 ບັດນີ້ເພິ່ນບໍ່ໄດ້ເອົາລູກຊາຍກົກຂອງເພິ່ນໄປນຳ, ແລະ ຊື່ຂອງລາວແມ່ນ [ກ]ຮີລາມັນ; ແລະ ຊື່ຂອງຜູ້ທີ່ເພິ່ນເອົາໄປນຳແມ່ນຊິບລັນ ແລະ ໂຄຣິອານທັນ; ແລະ ນີ້ຄືຊື່ຂອງຜູ້ທີ່ໄດ້ໄປຫາ [ຂ]ຊາວໂຊຣຳກັບເພິ່ນເພື່ອໄປສັ່ງສອນພຣະຄຳໃຫ້ແກ່ພວກເຂົາ.

8 ບັດນີ້ຊາວໂຊຣຳເປັນ [ກ]ພວກທີ່ໄດ້ແຍກອອກໄປຈາກຊາວນີໄຟ; ສະນັ້ນ ພວກເຂົາຈຶ່ງເຄີຍໄດ້ຮັບການສັ່ງສອນເຖິງພຣະຄຳຂອງພຣະເຈົ້າມາກ່ອນແລ້ວ.

9 ແຕ່ວ່າ ພວກເຂົາໄດ້ [ກ]ຕົກໄປສູ່ຄວາມຜິດພາດອັນໃຫຍ່ຫລວງ ເພາະວ່າພວກ

**31** 1*ກ* ອພຍ 20:5; ມຊຢ 13:13.
*ຂ* 2 ນຟ 9:37. ຄມພ ການນັບຖືຮູບບູຊາ.
*ຄ* ແອວ 35:15.
2*ກ* ມຊຢ 28:3; 3 ນຟ 17:14; ມຊ 7:41.
5*ກ* ອນ 1:23; ແອວ 4:19. ຄມພ ສັ່ງສອນ.
*ຂ* ຮຣ 4:12; ຢຄ 2:8; ແອວ 36:26.
*ຄ* ຈຣ 1:11–12; ຄພ 11:2.
7*ກ* ຄມພ ຮີລາມັນ, ລູກຊາຍຂອງແອວມາ.
*ຂ* ແອວ 30:59.
8*ກ* ແອວ 24:30.
9*ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.

ເຂົາບໍ່ໄດ້ຍຶດຖືທີ່ຈະຮັກສາພຣະບັນຍັດຂອງພຣະເຈົ້າ, ແລະ ຂໍ້ກຳນົດຂອງພຣະອົງຕາມກົດຂອງໂມເຊ.

10 ທັງພວກເຂົາບໍ່ຍອມປະຕິບັດຕາມພິທີການຂອງສາດສະໜາຈັກ, ໃນການອະທິຖານ ແລະ ອ້ອນວອນຕໍ່ພຣະເຈົ້າທຸກໆວັນ, ເພື່ອພວກເຂົາຈະບໍ່ໄດ້ເຂົ້າໄປສູ່ການລໍ້ລວງ.

11 ແທ້ຈິງແລ້ວ, ໂດຍສະຫລຸບ, ພວກເຂົາໄດ້ບິດເບືອນທາງຂອງພຣະຜູ້ເປັນເຈົ້າຫລາຍຕໍ່ຫລາຍຢ່າງ; ສະນັ້ນ, ດ້ວຍເຫດນີ້, ແອວມາ ແລະ ອ້າຍນ້ອງຂອງເພິ່ນຈຶ່ງໄດ້ເຂົ້າໄປໃນແຜ່ນດິນເພື່ອສັ່ງສອນພຣະຄຳໃຫ້ແກ່ພວກເຂົາ.

12 ບັດນີ້ ເວລາພວກເພິ່ນໄດ້ມາຮອດແຜ່ນດິນນີ້ແລ້ວ, ຈົ່ງເບິ່ງ, ມັນເຮັດໃຫ້ພວກເພິ່ນປະຫລາດໃຈຫລາຍທີ່ໄດ້ເຫັນວ່າຊາວໂຊຣຳໄດ້ສ້າງທຳມະສາລາໄວ້, ແລະ ວ່າພວກເຂົາໄດ້ມາເຕົ້າໂຮມກັນອາທິດລະເທື່ອ, ເພາະມັນເປັນມື້ທີ່ພວກເຂົາເອີ້ນວ່າມື້ຂອງພຣະຜູ້ເປັນເຈົ້າ; ແລະ ພວກເຂົາໄດ້ນະມັດສະການຕາມແບບຢ່າງຂອງພວກເຂົາ ຊຶ່ງແອວມາ ແລະ ອ້າຍນ້ອງຂອງລາວບໍ່ເຄີຍເຫັນມາກ່ອນ;

13 ພວກເຂົາມີບ່ອນໜຶ່ງຊຶ່ງໄດ້ສ້າງຂຶ້ນໄວ້ກາງທຳມະສາລາຂອງພວກເຂົາ, ຊຶ່ງເປັນບ່ອນສຳລັບໃຫ້ຄົນຢືນ ຊຶ່ງສູງກວ່າຫົວຄົນ; ແລະ ຂ້າງເທິງນັ້ນຄົນໜຶ່ງສາມາດຂຶ້ນໄປໄດ້ເທົ່ານັ້ນ.

14 ສະນັ້ນ, ຜູ້ໃດກໍຕາມທີ່ປາດຖະໜາຈະມາ [ກ]ນະມັດສະການກໍຕ້ອງອອກໄປຢືນຢູ່ເທິງນັ້ນ, ແລະ ເດ່ມືຂຶ້ນເທິງຟ້າ, ແລະຮ້ອງອອກມາດ້ວຍສຽງອັນດັງວ່າ:

15 ບໍລິສຸດ, ພຣະເຈົ້າຜູ້ບໍລິສຸດ; ພວກຂ້ານ້ອຍເຊື່ອວ່າ ພຣະອົງຄືພຣະເຈົ້າ, ແລະພວກຂ້ານ້ອຍເຊື່ອວ່າພຣະອົງບໍລິສຸດ, ແລະ ວ່າພຣະອົງເປັນວິນຍານມາແລ້ວ, ແລະ ວ່າພຣະອົງເປັນວິນຍານຢູ່, ແລະວ່າພຣະອົງຈະເປັນວິນຍານຕະຫລອດໄປ.

16 ພຣະເຈົ້າຜູ້ບໍລິສຸດເອີຍ, ພວກຂ້ານ້ອຍເຊື່ອວ່າ ພຣະອົງໄດ້ແຍກພວກຂ້ານ້ອຍອອກຈາກພີ່ນ້ອງຂອງພວກຂ້ານ້ອຍ; ແລະ ພວກຂ້ານ້ອຍບໍ່ເຊື່ອຖືຮີດຄອງປະເພນີຂອງພີ່ນ້ອງຂອງພວກຂ້ານ້ອຍ, ທີ່ຖືກມອບໃຫ້ຕໍ່ໆກັນມາ ຍ້ອນປັນຍາທີ່ອ່ອນແອຂອງບັນພະບຸລຸດຂອງພວກເຂົາ; ແຕ່ພວກຂ້ານ້ອຍເຊື່ອວ່າ ພຣະອົງໄດ້ [ກ]ເລືອກພວກຂ້ານ້ອຍໃຫ້ເປັນລູກຜູ້ [ຂ]ບໍລິສຸດຂອງພຣະອົງ; ແລະ ພຣະອົງເຮັດໃຫ້ພວກຂ້ານ້ອຍຮູ້ຈັກອີກວ່າມັນຈະບໍ່ມີພຣະຄຣິດ.

17 ແຕ່ວ່າພຣະອົງເປັນເໝືອນກັນເຊັ່ນມື້ວານນີ້, ມື້ນີ້, ແລະ ຕະຫລອດການ; ແລະພຣະອົງ [ກ]ເລືອກພວກຂ້ານ້ອຍເພື່ອພວກຂ້ານ້ອຍຈະໄດ້ລອດ, ໃນຂະນະທີ່ທຸກຄົນທີ່ຢູ່ອ້ອມຂ້າງພວກຂ້ານ້ອຍໄດ້ຖືກເລືອກເພື່ອເອົາລົງໄປນະລົກໂດຍພຣະພິໂລດຂອງພຣະອົງ; ເພາະຄວາມສັກສິດອັນນີ້, ໂອ້ ພຣະອົງເຈົ້າ, ພວກຂ້ານ້ອຍຂອບພຣະໄທພຣະອົງ; ແລະ ພວກຂ້ານ້ອຍຂອບພຣະໄທພຣະອົງອີກທີ່ເລືອກພວກຂ້ານ້ອຍເພື່ອພວກຂ້ານ້ອຍຈະບໍ່ໄດ້ຖືກຊັກນຳໄປຕາມຮີດຄອງປະເພນີອັນໂງ່ຈ້າຫລ້າຫລັງຂອງພີ່ນ້ອງຂອງພວກຂ້ານ້ອຍ, ຊຶ່ງໄດ້ມັດພວກເຂົາລົງສູ່ຄວາມເຊື່ອຖືກ່ຽວກັບພຣະຄຣິດ, ຊຶ່ງໄດ້ຊັກນຳໃຈຂອງພວກເຂົາໃຫ້ເຫີນຫ່າງໄປຈາກພຣະອົງຜູ້ເປັນພຣະເຈົ້າຂອງພວກຂ້ານ້ອຍ.

18 ແລະ ພວກຂ້ານ້ອຍຂອບພຣະໄທ

14 ກ ມທ 6:1–7.
16 ກ ແອວ 38:13–14.
ຂ ອຊຢ 65:3, 5.
17 ກ ຄນພ ອວດອົ່ງ, ຄວາມອວດອົ່ງ.

ພຣະອົງອີກເທື່ອໜຶ່ງ, ໂອ້ ພຣະອົງເຈົ້າ, ທີ່
ພວກຂ້ານ້ອຍ ໄດ້ເປັນຜູ້ຖືກເລືອກ ແລະ
ເປັນຜູ້ບໍລິສຸດ. ອາແມນ.

19 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກແອວມາ ແລະ ພີ່ນ້ອງຂອງເພິ່ນ ແລະ
ລູກຊາຍຂອງເພິ່ນ ໄດ້ຍິນຄຳອະທິຖານ
ເຫລົ່ານີ້ແລ້ວ, ພວກເພິ່ນກໍແປກປະຫລາດ
ໃຈເກີນກວ່າທີ່ຈະວັດແທກໄດ້.

20 ເພາະ ຈົ່ງເບິ່ງ, ທຸກຄົນໄດ້ອອກໄປ
ແລະ ຖວາຍການອະທິຖານແບບດຽວກັນ.

21 ບັດນີ້ພວກເຂົາເອີ້ນບ່ອນນັ້ນວ່າ ແຣ
ມີອຳທຳ, ຊຶ່ງແປວ່າ ແທ່ນສັກສິດ.

22 ບັດນີ້ຈາກແທ່ນສັກສິດນີ້ ຜູ້ຊາຍທຸກ
ຄົນໄດ້ຖວາຍການອະທິຖານແບບດຽວກັນ
ຕໍ່ພຣະເຈົ້າ ຂອບພຣະໄທພຣະເຈົ້າຂອງ
ພວກເຂົາ ທີ່ພວກເຂົາໄດ້ຖືກເລືອກຈາກ
ພຣະອົງ, ແລະ ວ່າພຣະອົງບໍ່ໄດ້ຊັກນຳ
ພວກເຂົາໄປຕາມຮີດຄອງປະເພນີຂອງ
ພີ່ນ້ອງຂອງພວກເຂົາ, ແລະ ວ່າໃຈຂອງ
ພວກເຂົາບໍ່ໄດ້ຖືກລັກພາໄປໃຫ້ເຊື່ອຖືໃນ
ສິ່ງທີ່ຈະມາເຖິງ, ຊຶ່ງພວກເຂົາບໍ່ຮູ້ຈັກເລື່ອງ
ເຫລົ່ານີ້ເລີຍ.

23 ບັດ ນີ້, ຫລັງ ຈາກ ທີ່ ຜູ້ ຄົນ ຖວາຍ
ຄວາມຂອບພຣະໄທຕາມວິທີນີ້ແລ້ວ, ພວກ
ເຂົາກໍໄດ້ກັບຄືນໄປຫາເຮືອນຊານຂອງ
ຕົນ, ແລະ ພວກເຂົາ [ກ]ບໍ່ເວົ້າເຖິງພຣະເຈົ້າ
ຂອງພວກເຂົາອີກຈົນກວ່າຈະໄດ້ມາຊຸມ
ນຸມກັນອີກເທື່ອໃໝ່ທີ່ແທ່ນສັກສິດ, ເພື່ອ
ຖວາຍຄວາມຂອບພຣະໄທຕາມວິທີຂອງ
ພວກເຂົາ.

24 ບັດນີ້ເມື່ອແອວມາເຫັນສິ່ງເຫລົ່ານີ້
ແລ້ວ ໃຈຂອງເພິ່ນ [ກ]ໂສກເສົ້າ; ເພາະວ່າ
ເພິ່ນເຫັນວ່າພວກເຂົາເປັນຄົນຊົ່ວ ແລະ
ເສຍຄົນໄປແລ້ວ; ແທ້ຈິງແລ້ວ, ເພິ່ນເຫັນ
ວ່າໃຈຂອງພວກເຂົາໝົກໝຸ້ນຢູ່ກັບຄຳ
ແລະ ຢູ່ກັບເງິນ, ແລະ ຢູ່ກັບສິ່ງຂອງອັນ
ສວຍງາມນາໆຊະນິດ.

25 ແທ້ຈິງແລ້ວ, ແລະ ເພິ່ນເຫັນອີກວ່າ
ໃຈຂອງພວກເຂົາ [ກ]ໃຝ່ຝັນໃນການອວດ
ອ້າງ, ແລະ ໃນຄວາມທະນົງຕົວຂອງພວກ
ເຂົາ.

26 ແລະ ເພິ່ນໄດ້ເປັ່ງສຽງຂອງເພິ່ນຂຶ້ນ
ຫາຟ້າສະຫວັນ, [ກ]ຮ້ອງທູນວ່າ: ໂອ້, ຍັງອີກ
ດົນປານໃດ, ໂອ້ ພຣະຜູ້ເປັນເຈົ້າ, ທີ່ພຣະ
ອົງຈະຍອມໃຫ້ຜູ້ຮັບໃຊ້ຂອງພຣະອົງຜູ້ຢູ່
ທາງລຸ່ມໃນເນື້ອໜັງເຫັນຄວາມຊົ່ວຮ້າຍ
ອັນຮຸນແຮງແບບນີ້ໃນບັນດາລູກຫລານ
ມະນຸດ?

27 ຈົ່ງເບິ່ງ, ໂອ້ ພຣະອົງເຈົ້າ, ພວກເຂົາ
[ກ]ຮ້ອງທູນຕໍ່ພຣະອົງ, ແຕ່ໃຈຂອງພວກເຂົາ
ຖືກກືນເຂົ້າໄປໃນຄວາມທະນົງຕົວຂອງ
ພວກເຂົາ. ຈົ່ງທອດພຣະເນດເຖີດ, ໂອ້
ພຣະອົງເຈົ້າ, ພວກເຂົາຮ້ອງທູນຕໍ່ພຣະ
ອົງແຕ່ປາກ ຂະນະທີ່ພວກເຂົາ [ຂ]ອວດອົ່ງ,
ຈົນເຖິງຄວາມໃຫຍ່ຫລວງ,ໃນສິ່ງທີ່ບໍ່ມີປະ
ໂຫຍດຂອງໂລກ.

28 ຈົ່ງ ເບິ່ງ, ໂອ້ ພຣະ ອົງ ເຈົ້າ ຂອງ ຂ້າ
ນ້ອຍ, ຈົ່ງທອດພຣະເນດເບິ່ງເຄື່ອງນຸ່ງທີ່ມີ
ລາຄາແພງ ແລະ ແຫວນຂໍ້ມື ແລະ [ກ]ສາຍ
ແຂນຂອງພວກເຂົາ, ແລະ ເຄື່ອງເອ້ເປັນ
ຄຳຂອງພວກເຂົາ, ແລະ ຂອງທີ່ມີຄຸນຄ່າ
ທັງໝົດຂອງພວກເຂົາ; ຊຶ່ງພວກເຂົາໃຊ້
ປະດັບປະດາ, ແລະ ຈົ່ງເບິ່ງ, ໃຈຂອງພວກ
ເຂົາໝົກໝຸ້ນຢູ່ກັບສິ່ງຂອງເຫລົ່ານີ້ ແຕ່
ພວກເຂົາຍັງຮ້ອງທູນຕໍ່ພຣະອົງ ແລະ ກ່າວ
ວ່າ—ພວກຂ້ານ້ອຍຂອບພຣະໄທພຣະອົງ,

23 *ກ* ຢກບ 1:21–25.
24 *ກ* ປຖກ 6:5–6.
25 *ກ* ຢຄ 2:13;
ແອວ 1:32.
26 *ກ* ມຊ 7:41–58.
27 *ກ* ອຊຢ 29:13.
*ຂ* ຄມພ ຈອງຫອງ,
ຄວາມຈອງຫອງ.
28 *ກ* ອຊຢ 3:16–24.

ໂອ້ ພຣະອົງເຈົ້າ, ເພາະພວກຂ້ານ້ອຍເປັນ
ພວກທີ່ຖືກເລືອກໄວ້ໃນຂະນະທີ່ຄົນອື່ນໆ
ຕ້ອງຕາຍ.
29 ແທ້ຈິງແລ້ວ, ພວກເຂົາກ່າວວ່າ ພຣະ
ອົງໄດ້ເຮັດໃຫ້ພວກເຂົາຮູ້ວ່າ ມັນຈະບໍ່ມີ
ພຣະຄຣິດ.
30 ໂອ້ ອົງພຣະຜູ້ເປັນເຈົ້າ, ຍັງອີກດົນ
ປານໃດທີ່ພຣະອົງຈະຍອມໃຫ້ຄວາມຊົ່ວ
ຮ້າຍ ແລະ ຄວາມບໍ່ຊື່ສັດເຫລົ່ານີ້ຢູ່ໃນບັນ
ດາຜູ້ຄົນພວກນີ້? ໂອ້ ພຣະຜູ້ເປັນເຈົ້າ, ຂໍ
ພຣະອົງຈົ່ງໂປດປະທານພະລັງໃຫ້ຂ້າ
ນ້ອຍດ້ວຍເຖີດ, ເພື່ອວ່າຂ້ານ້ອຍຈະໄດ້
ທົນກັບຄວາມບົກພ່ອງຂອງຂ້ານ້ອຍ.
ເພາະວ່າຂ້ານ້ອຍອ່ອນແອ ແລະ ຄວາມ
ຊົ່ວຮ້າຍເຊັ່ນນີ້ໃນບັນດາຜູ້ຄົນພວກນີ້ເຮັດ
ໃຫ້ຈິດວິນຍານຂອງຂ້ານ້ອຍເຈັບປວດ
ຫລາຍ.
31 ໂອ້ ພຣະຜູ້ເປັນເຈົ້າ, ໃຈຂອງຂ້າ
ນ້ອຍເສົ້າສະຫລົດຫລາຍ; ຂໍພຣະອົງຈົ່ງ
ປອບໂຍນຈິດວິນຍານຂອງຂ້ານ້ອຍ [ກ]ໃນ
ພຣະຄຣິດດ້ວຍເຖີດ. ໂອ້ ພຣະອົງເຈົ້າ
ເອີຍ, ຂໍພຣະອົງຈົ່ງໂປດປະທານແກ່ຂ້າ
ນ້ອຍ ເພື່ອຂ້ານ້ອຍຈະມີພະລັງດ້ວຍເຖີດ,
ເພື່ອຂ້ານ້ອຍຈະໄດ້ຮັບຄວາມທຸກເຫລົ່ານີ້
ດ້ວຍຄວາມອົດທົນ ຊຶ່ງມັນຈະເກີດຂຶ້ນກັບ
ຂ້ານ້ອຍຍ້ອນຄວາມຊົ່ວຮ້າຍຂອງຜູ້ຄົນ
ພວກນີ້.
32 ໂອ້ ພຣະຜູ້ເປັນເຈົ້າ, ຂໍພຣະອົງຈົ່ງ
ປອບໂຍນຈິດວິນຍານຂອງຂ້ານ້ອຍດ້ວຍ
ເຖີດ, ແລະ ປະທານຄວາມສຳເລັດໃຫ້
ແກ່ຂ້ານ້ອຍ, ແລະ ເພື່ອນຮ່ວມງານຂອງ
ຂ້ານ້ອຍຜູ້ຊຶ່ງຢູ່ນຳຂ້ານ້ອຍດ້ວຍເຖີດ—ຄື
ອຳໂມນ, ແລະ ອາໂຣນ, ແລະ ອອມເນີ,
ແລະ ແອມມິວເລັກກັບຊີເອສຣອມນຳອີກ,
ພ້ອມດ້ວຍລູກຊາຍ [ກ]ສອງຄົນຂອງຂ້າ
ນ້ອຍນຳອີກ—ແທ້ຈິງແລ້ວ, ຂໍໃຫ້ພຣະອົງ
ຈົ່ງປອບໂຍນເຂົາເຈົ້າທັງໝົດດ້ວຍເຖີດ,
ໂອ້ ພຣະຜູ້ເປັນເຈົ້າ. ແທ້ຈິງແລ້ວ, ຂໍພຣະ
ອົງຈົ່ງປອບໂຍນຈິດວິນຍານຂອງເຂົາເຈົ້າ
ໃນພຣະຄຣິດດ້ວຍເຖີດ.
33 ຂໍໃຫ້ພຣະອົງຈົ່ງປະທານໃຫ້ເຂົາເຈົ້າ
ເພື່ອເຂົາເຈົ້າຈະໄດ້ມີພະລັງ, ເພື່ອເຂົາເຈົ້າ
ຈະໄດ້ທົນຕໍ່ຄວາມທຸກຂອງເຂົາເຈົ້າ ຊຶ່ງມັນ
ຈະເກີດກັບເຂົາເຈົ້າຍ້ອນຄວາມຊົ່ວຮ້າຍ
ຂອງຜູ້ຄົນພວກນີ້.
34 ໂອ້ ພຣະຜູ້ເປັນເຈົ້າ, ຂໍພຣະອົງຈົ່ງ
ປະທານ [ກ]ໃຫ້ພວກຂ້ານ້ອຍ ເພື່ອພວກຂ້າ
ນ້ອຍຈະມີຄວາມສຳເລັດໃນການນຳພາຜູ້
ຄົນເຫລົ່ານີ້ມາຫາພຣະອົງໃນພຣະຄຣິດ
ອີກ.
35 ຂໍຈົ່ງທອດພຣະເນດເຖີດ, ໂອ້ ພຣະຜູ້
ເປັນເຈົ້າ, [ກ]ຈິດວິນຍານຂອງພວກເຂົາປະ
ເສີດ ແລະ ຫລາຍຄົນໃນບັນດາພວກເຂົາ
ເປັນພີ່ນ້ອງຂອງພວກຂ້ານ້ອຍ; ສະນັ້ນ,
ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງໂປດປະທານພະ
ລັງ ແລະ ປັນຍາໃຫ້ແກ່ພວກຂ້ານ້ອຍດ້ວຍ
ເຖີດ, ເພື່ອພວກຂ້ານ້ອຍຈະໄດ້ນຳພວກ
ເຂົາເຫລົ່ານີ້ມາຫາພຣະອົງອີກ.
36 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ແອວມາກ່າວຂໍ້ຄວາມນີ້ແລ້ວ, ຄືເພິ່ນໄດ້
[ກ]ວາງ [ຂ]ມືຂອງເພິ່ນໃສ່ທຸກຄົນທີ່ຢູ່ກັບເພິ່ນ.
ແລະ ຈົ່ງເບິ່ງ, ເວລາທີ່ເພິ່ນວາງມືຂອງເພິ່ນ
ໃສ່ພວກເພິ່ນ, ພວກເພິ່ນກໍເຕັມປ່ຽມໄປ
ດ້ວຍພຣະວິນຍານສັກສິດ.
37 ແລະ ຫລັງຈາກນັ້ນ ພວກເພິ່ນໄດ້
ແຍກຍ້າຍກັນໄປ [ກ]ໂດຍບໍ່ໄດ້ຄິດວ່າພວກ

31 *ກ* ຢຣ 16:33.
32 *ກ* ແອວ 31:7.
34 *ກ* 2 ນຟ 26:33.
35 *ກ* ຄມພ ຈິດວິນຍານ—ຄຸນຄ່າຂອງຈິດວິນຍານ.
36 *ກ* 3 ນຟ 18:36–37.
*ຂ* ຄມພ ມື, ການວາງ.
37 *ກ* ມທ 6:25–34; 3 ນຟ 13:25–34.

ເພິ່ນ ຈະ ກິນ ຫຍັງ, ຫລື ພວກ ເພິ່ນ ຈະ ດື່ມ
ຫຍັງ, ຫລື ພວກເພິ່ນຈະນຸ່ງຫົ່ມຫຍັງ.
38 ແລະ ພຣະຜູ້ ເປັນ ເຈົ້າ ໄດ້ ຈັດ ຕຽມ
ໄວ້ໃຫ້ພວກເພິ່ນ ເພື່ອພວກເພິ່ນຈະບໍ່ໄດ້
ຫິວເຂົ້າ ແລະ ບໍ່ກະຫາຍນ້ຳ; ແທ້ຈິງແລ້ວ,
ພຣະອົງ ໄດ້ ປະທານພະລັງ ໃຫ້ ແກ່ພວກ
ເພິ່ນ ເພື່ອພວກເພິ່ນຈະບໍ່ຕ້ອງ [ກ]ຮັບທຸກອັນ
ໃດເລີຍ ນອກຈາກຈະຖືກກືນເຂົ້າໄປໃນ
ຄວາມສຸກຂອງພຣະຄຣິດ. ບັດນີ້ມັນກໍເປັນ
ໄປຕາມຄຳອະທິຖານຂອງແອວມາ; ແລະ
ມັນໄດ້ເປັນໄປເຊັ່ນນີ້ຍ້ອນວ່າເພິ່ນໄດ້ອະທິ
ຖານດ້ວຍ [ຂ]ສັດທາ.

## ບົດທີ 32

*ແອວມາສິດສອນຄົນຍາກຈົນຜູ້ຊຶ່ງຄວາມທຸກເຮັດໃຫ້ພວກເຂົາຖ່ອມຕົວ—ສັດທາແມ່ນຄວາມຫວັງໃນສິ່ງທີ່ບໍ່ເຄີຍເຫັນ ຊຶ່ງເປັນຄວາມຈິງ—ແອວມາໃຫ້ຖ້ອຍຄຳວ່າເຫລົ່າທູດປະຕິບັດສາດສະໜາກິດແກ່ຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ—ແອວມາປຽບທຽບພຣະທຳໃສ່ກັບເມັດພືດ—ມັນຕ້ອງຖືກເອົາໄປປູກ ແລະ ບຳລຸງລ້ຽງ—ແລ້ວມັນຈະເຕີບໂຕເປັນກົກໃຫຍ່ ເພື່ອຈະໄດ້ປິດເອົາໝາກໄມ້ນິລັນດອນຈາກຕົ້ນນັ້ນ. ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເພິ່ນໄດ້ອອກໄປ, ແລະ ເລີ່ມຕົ້ນສັ່ງສອນ
ພຣະຄຳຂອງພຣະເຈົ້າໃຫ້ແກ່ຜູ້ຄົນ, ໂດຍ
ເຂົ້າໄປໃນທຳມະສາລາ ແລະ ໃນບ້ານ
ເຮືອນຂອງພວກເຂົາ; ແທ້ຈິງແລ້ວ, ແລະ
ພວກເພິ່ນໄດ້ສັ່ງສອນພຣະຄຳເຖິງແມ່ນ
ຕາມຖະໜົນຫົນທາງຂອງພວກເຂົານຳອີກ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ໄດ້ທຳງານຢ່າງພາກພຽນໃນບັນ
ດາພວກເຂົາ, ພວກເພິ່ນກໍເລີ່ມມີຄວາມ
ສຳເລັດໃນບັນດາ [ກ]ຄົນຍາກຈົນ; ເພາະ
ຈົ່ງເບິ່ງ, ພວກເຂົາໄດ້ຖືກຂັບໄລ່ອອກຈາກ
ທຳມະສາລາ ເພາະເສື້ອຜ້າລາຄາຖືກຂອງ
ພວກເຂົາ—
3 ສະນັ້ນ ພວກ ເຂົາ ຈຶ່ງ ຖືກ ຫ້າມ ບໍ່ ໃຫ້
ເຂົ້າ ໄປ ໃນທຳມະສາລາຂອງພວກເຂົາ
ເພື່ອນະມັດສະການພຣະເຈົ້າ, ເພາະຖືວ່າ
ເປັນຄວາມສົກກະປົກ; ສະນັ້ນ ພວກເຂົາ
ຈຶ່ງຍາກຈົນ; ແທ້ຈິງແລ້ວ, ພວກເຂົາຖືກພີ່
ນ້ອງຂອງພວກເຂົາຖືວ່າ ພວກເຂົາບໍ່ມີຄຸນ
ຄ່າ; ສະນັ້ນ ພວກເຂົາຈຶ່ງ [ກ]ຍາກຈົນທາງ
ໂລກ ແລະ ຍາກຈົນໃນໃຈນຳອີກ.
4 ບັດນີ້, ຂະນະ ທີ່ແອວມາກຳລັງສິດ
ສອນ ແລະ ເວົ້າກັບຜູ້ຄົນຢູ່ເທິງເນີນພູໂອ
ໄນດາ, ມີຝູງຊົນເປັນຈຳນວນຫລວງຫລາຍ
ມາຫາເພິ່ນ, ຊຶ່ງຄືຄົນທີ່ພວກເຮົາກຳລັງເວົ້າ
ເຖິງຢູ່, ຜູ້ [ກ]ຍາກຈົນໃນໃຈ, ເພາະຄວາມ
ຍາກຈົນຂອງພວກເຂົາກ່ຽວກັບສິ່ງຂອງ
ທາງໂລກ.
5 ແລະ ພວກເຂົາໄດ້ເຂົ້າມາຫາແອວມາ;
ແລະ ຄົນໜຶ່ງຊຶ່ງເດັ່ນທີ່ສຸດໃນບັນດາພວກ
ເຂົາ ກ່າວກັບເພິ່ນວ່າ: ຈົ່ງເບິ່ງ, ພີ່ນ້ອງ
ພວກນີ້ຂອງຂ້າພະເຈົ້າຈະເຮັດ [ກ]ແນວໃດ
ເພາະພວກເຂົາຖືກຄົນທັງປວງໝິ່ນປະ
ໝາດເພາະຄວາມຍາກຈົນຂອງພວກເຂົາ,
ແທ້ຈິງແລ້ວ, ໂດຍສະເພາະແມ່ນພວກປະ
ໂລຫິດຂອງພວກເຮົາ; ເພາະພວກເຂົາໄດ້
[ຂ]ຂັບໄລ່ພວກເຮົາອອກຈາກທຳມະສາລາ

38 *ກ* ມທ 5:10–12; ມຊຢ 24:13–15; ແອວ 33:23.
*ຂ* ຄມພ ສັດທາ.

**32** 2 *ກ* ຄມພ ຍາກຈົນ.
3 *ກ* ແອວ 34:40.
4 *ກ* ຄມພ ຍາກຈົນ—ຄົນທີ່ຍາກຈົນທາງວິນຍານ.

5 *ກ* ສພສ 18:23.
*ຂ* ແອວ 33:10.

ຂອງພວກເຮົາ ຊຶ່ງພວກເຮົາໄດ້ລົງແຮງໄວ້
ຢ່າງຫລວງຫລາຍ ແລະ ໄດ້ສ້າງດ້ວຍມື
ຂອງພວກເຮົາເອງ; ພວກເຂົາໄດ້ໄລ່ພວກ
ເຮົາໜີ ເພາະຄວາມ ຍາກ ຈົນຂອງພວກ
ເຮົາ ແລະ ພວກເຮົາບໍ່ມີບ່ອນທີ່ຈະນະມັດ
ສະການພຣະເຈົ້າຂອງພວກເຮົາ; ແລະ ຈົ່ງ
ເບິ່ງ, ພວກເຮົາຈະເຮັດ [ຄ]ແນວໃດດີ?
6 ແລະ ບັດນີ້ເມື່ອແອວມາໄດ້ຍິນເລື່ອງ
ນີ້ແລ້ວ, ເພິ່ນກໍໄດ້ຫັນຕົວມາ ແລະ ເບິ່ງ
ໜ້າຂອງຄົນນັ້ນທັນທີ; ແລະ ເພິ່ນໄດ້ເບິ່ງ
ດ້ວຍ ຄວາມ ປິ ຕິ ຍິນ ດີອັນໃຫຍ່ຫລວງ;
ເພາະເພິ່ນເຫັນວ່າ [ກ]ຄວາມທຸກຂອງພວກ
ເຂົາເຮັດໃຫ້ພວກເຂົາ [ຂ]ຖ່ອມຕົວລົງ, ແລະ
ພວກເຂົາຈະຢູ່ໃນ [ຄ]ການຕຽມພ້ອມທີ່ຈະ
ຟັງພຣະຄຳ.
7 ສະນັ້ນ ເພິ່ນຈຶ່ງບໍ່ໄດ້ກ່າວອັນໃດອີກ
ກັບຝູງຊົນ; ແຕ່ເພິ່ນໄດ້ເດ່ມືອອກໄປ ແລະ
ຮ້ອງປ່າວຕໍ່ຄົນທີ່ເພິ່ນເຫັນ, ຊຶ່ງເປັນຜູ້ສຳ
ນຶກຜິດຢ່າງຈິງໃຈ, ແລະ ກ່າວກັບພວກ
ເຂົາວ່າ:
8 ຂ້າພະເຈົ້າເຫັນວ່າ ພວກທ່ານ [ກ]ຕ່ຳ
ຕ້ອຍໃນໃຈ; ແລະ ຖ້າພວກທ່ານເປັນດັ່ງ
ນັ້ນ, ພວກທ່ານຍ່ອມເປັນສຸກແລ້ວ.
9 ຈົ່ງເບິ່ງ ພີ່ນ້ອງຂອງພວກທ່ານໄດ້ກ່າວ
ວ່າ ພວກເຮົາຈະເຮັດແນວໃດດີ?—ເພາະ
ພວກເຮົາໄດ້ຖືກຂັບໄລ່ອອກຈາກທຳມະ
ສາລາຂອງພວກເຮົາ, ສະນັ້ນ ພວກເຮົາຈຶ່ງ
ນະມັດສະການພຣະເຈົ້າຂອງພວກເຮົາບໍ່
ໄດ້.
10 ຈົ່ງ ເບິ່ງ ຂ້າ ພະ ເຈົ້າ ກ່າວ ກັບ ພວກ
ທ່ານວ່າ ພວກທ່ານຄິດບໍວ່າ ພວກທ່ານຈະ
[ກ]ນະມັດສະການພຣະເຈົ້າບໍ່ໄດ້ ນອກຈາກ
ຈະຢູ່ໃນທຳມະສາລາຂອງພວກທ່ານເທົ່າ
ນັ້ນ?
11 ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າຈະ
ຖາມວ່າ, ພວກທ່ານຄິດວ່າພວກທ່ານບໍ່
ຄວນນະມັດສະການພຣະເຈົ້ານອກຈາກ
ອາທິດລະເທື່ອເທົ່ານັ້ນບໍ?
12 ຂ້າພະເຈົ້າກ່າວກັບພວກທ່ານວ່າ,
ມັນເປັນການດີທີ່ພວກທ່ານໄດ້ຖືກຂັບໄລ່
ອອກຈາກທຳມະສາລາຂອງພວກທ່ານ,
ເພື່ອພວກທ່ານຈະໄດ້ຖ່ອມຕົວ, ແລະ ເພື່ອ
ພວກທ່ານຈະໄດ້ຮຽນຮູ້ [ກ]ປັນຍາ; ເພາະ
ມັນຈຳເປັນທີ່ພວກທ່ານຈະຮຽນຮູ້ປັນຍາ;
ເພາະມັນເປັນດ້ວຍວ່າ ພວກທ່ານຖືກຂັບ
ໄລ່, ວ່າພີ່ນ້ອງຂອງພວກທ່ານໝິ່ນປະ
ໝາດພວກທ່ານ ເພາະ [ຂ]ຄວາມຍາກຈົນ
ຫລາຍຂອງພວກທ່ານ, ຈຶ່ງນຳພວກທ່ານ
ມາຫາຄວາມຕ່ຳຕ້ອຍໃນໃຈ; ເພາະພວກ
ທ່ານຈຳຕ້ອງຖືກນຳມາໃຫ້ຖ່ອມຕົວ.
13 ແລະ ບັດນີ້, ເພາະພວກທ່ານຖືກບັງ
ຄັບໃຫ້ຖ່ອມຕົວ ພວກທ່ານຈຶ່ງເປັນສຸກ;
ເພາະວ່າບາງຄັ້ງຖ້າຫາກມະນຸດຖືກບັງຄັບ
ໃຫ້ຖ່ອມຕົວ, ເຂົາຈະສະແຫວງຫາການ
ກັບໃຈ; ແລະ ບັດນີ້ຜູ້ໃດກໍຕາມທີ່ກັບໃຈ,
ຜູ້ນັ້ນຈະພົບຄວາມເມດຕາຢ່າງແນ່ນອນ;
ແລະ ຜູ້ທີ່ພົບຄວາມເມດຕາ ແລະ [ກ]ອົດທົນ
ຈົນເຖິງທີ່ສຸດ ຜູ້ນັ້ນຈະລອດ.
14 ແລະ ບັດນີ້, ດັ່ງທີ່ຂ້າພະເຈົ້າໄດ້ເວົ້າ
ກັບພວກທ່ານມາແລ້ວວ່າ ເພາະພວກທ່ານ
ຖືກບັງຄັບໃຫ້ຖ່ອມຕົວ, ພວກທ່ານຈຶ່ງໄດ້
ຮັບພອນ. ພວກທ່ານຄິດບໍວ່າ ຄົນທີ່ຖ່ອມ
ຕົວໂດຍແທ້ເພາະພຣະຄຳ ຜູ້ນັ້ນຈະໄດ້ຮັບ
ພອນຫລາຍກວ່າ?

5 ຄ ກຈກ 2:37–38.
6 ກ ຄມພ ຍາກລຳບາກ, ຄວາມຍາກລຳບາກ.
ຂ ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
ຄ ແອວ 16:16–17; ຄພ 101:8.
8 ກ ມທ 5:3–5.
10 ກ ຄມພ ນະມັດສະການ.
12 ກ ປຍຈ 4:13.
ຂ ສພສ 16:8.
13 ກ ແອວ 38:2.

15 ແທ້ ຈິງ ແລ້ວ, ຜູ້ ທີ່ ຖ່ອມ ຕົວ ດ້ວຍ ຄວາມຈິງໃຈ ແລະ ກັບໃຈຈາກບາບຂອງ ຕົນ, ແລະ ອົດທົນຈົນເຖິງທີ່ສຸດ, ຜູ້ນັ້ນຈະ ໄດ້ຮັບພອນ—ແທ້ຈິງແລ້ວ, ຜູ້ນັ້ນຈະໄດ້ ຮັບພອນຫລາຍກວ່າ ຜູ້ທີ່ຖືກ ບັງຄັບ ໃຫ້ ຖ່ອມຕົວ ເພາະຄວາມຍາກຈົນຢ່າງຍິ່ງ ຂອງຕົນ.

16 ສະນັ້ນ, ຄົນທີ່ຖ່ອມຕົວໂດຍບໍ່ໄດ້ຖືກ ບັງຄັບໃຫ້ [ກ]ຖ່ອມຕົວຍ່ອມເປັນສຸກ; ຫລື ອີກຄຳໜຶ່ງ, ຄົນທີ່ເຊື່ອຖືໃນພຣະຄຳຂອງ ພຣະເຈົ້າ ແລະ ຮັບບັບຕິສະມາໂດຍບໍ່ດື້ ດ້ານໃຈຍ່ອມເປັນສຸກ, ແທ້ຈິງແລ້ວ, ໂດຍບໍ່ ໄດ້ຖືກນຳມາໃຫ້ຮູ້ຈັກພຣະຄຳ, ຫລື ຖືກບັງ ຄັບໃຫ້ຮູ້ຈັກກ່ອນທີ່ເຂົາຈະເຊື່ອ.

17 ແທ້ຈິງແລ້ວ, ມີຢູ່ຫລາຍຄົນທີ່ເວົ້າ ວ່າ: ຖ້າຫາກທ່ານຈະສະແດງ [ກ]ເຄື່ອງໝາຍ ຈາກສະຫວັນແກ່ພວກເຮົາແລ້ວ, ພວກເຮົາ ຈຶ່ງຈະຮູ້ເຖິງຄວາມແນ່ນອນ; ເມື່ອນັ້ນພວກ ເຮົາຈຶ່ງຈະເຊື່ອ.

18 ບັດນີ້ຂ້າພະເຈົ້າຂໍຖາມວ່າ ນີ້ແມ່ນ ສັດທາບໍ? ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບ ພວກທ່ານວ່າ, ບໍ່ເລີຍ; ເພາະຖ້າຫາກ ລາວ ຮູ້ສິ່ງນັ້ນແລ້ວ ລາວກໍບໍ່ມີເຫດຜົນທີ່ຈະຕ້ອງ [ກ]ເຊື່ອ, ເພາະລາວຮູ້ມັນແລ້ວ.

19 ແລະ ບັດນີ້ຄົນທີ່ [ກ]ຮູ້ພຣະປະສົງຂອງ ພຣະເຈົ້າແລ້ວບໍ່ປະຕິບັດຕາມຈະຖືກສາບ ແຊ່ງຫລາຍປານໃດກວ່າຄົນທີ່ພຽງແຕ່ເຊື່ອ ຫລື ພຽງມີເຫດຜົນທີ່ຈະເຊື່ອ ແລະ ຕົກຢູ່ ໃນການລ່ວງລະເມີດ?

20 ບັດ ນີ້ພວກທ່ານ ຄວນ ຕັດ ສິນ ກ່ຽວ ກັບເລື່ອງນີ້. ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບ ພວກທ່ານວ່າ ມັນເປັນທາງໜຶ່ງ ແມ່ນດັ່ງທີ່ ມັນເປັນອີກທາງໜຶ່ງ; ແລະ ມັນຈະເປັນກັບ ມະນຸດທຸກຄົນຕາມວຽກງານຂອງເຂົາ.

21 ແລະ ບັດນີ້ດັ່ງທີ່ຂ້າພະເຈົ້າໄດ້ເວົ້າ ມາແລ້ວກ່ຽວກັບ [ກ]ສັດທາ—ສັດທາບໍ່ ແມ່ນການມີຄວາມຮູ້ອັນສົມບູນເຖິງເລື່ອງ ຕ່າງໆ; ສະນັ້ນ ຖ້າຫາກພວກທ່ານມີສັດທາ ພວກທ່ານກໍ [ຂ]ຫວັງໃນສິ່ງທີ່ [ຄ]ບໍ່ເຄີຍເຫັນ, ຊຶ່ງເປັນຄວາມຈິງ.

22 ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າເວົ້າ ກັບພວກທ່ານ, ແລະ ຢາກໃຫ້ພວກທ່ານ ຈຳໄວ້, ວ່າພຣະເຈົ້າມີຄວາມເມດຕາຕໍ່ຄົນ ທັງປວງທີ່ເຊື່ອໃນພຣະນາມຂອງພຣະອົງ; ສະນັ້ນ ພຣະອົງຈຶ່ງປາດຖະໜາໃນປະການ ທຳອິດໃຫ້ທ່ານເຊື່ອໃນພຣະຄຳຂອງພຣະ ອົງ.

23 ແລະ ບັດນີ້, ພຣະອົງໄດ້ໃຫ້ພຣະຄຳ ຂອງພຣະອົງແກ່ມະນຸດຈາກເຫລົ່າທູດ, ແທ້ຈິງແລ້ວ, [ກ]ບໍ່ແມ່ນແຕ່ໃຫ້ຜູ້ຊາຍເທົ່າ ນັ້ນ ແຕ່ໃຫ້ແກ່ຜູ້ຍິງນຳອີກ. ບັດນີ້ຍັງບໍ່ໝົດ; [ຂ]ເດັກນ້ອຍໆກໍໄດ້ຮັບພຣະຄຳມາສູ່ຕົນເອງ ຫລາຍເທື່ອ, ຈົນວ່າຈະເຮັດໃຫ້ຄົນທີ່ມີປັນ ຍາ ແລະ ຄົນທີ່ມີການສຶກສາຍອມຈຳນົນ.

24 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ ຂ້າພະເຈົ້າ, ເນື່ອງຈາກວ່າພວກທ່ານປາດ ຖະໜາຢາກຮູ້ຈາກຂ້າພະເຈົ້າວ່າພວກທ່ານ ຄວນຈະເຮັດແນວໃດດີ ເພາະພວກທ່ານ ເປັນທຸກ ແລະ ໄດ້ຖືກຂັບໄລ່ອອກມາ—ບັດ ນີ້ຂ້າພະເຈົ້າບໍ່ຢາກໃຫ້ພວກທ່ານຄິດວ່າ ຂ້າພະເຈົ້າຕັ້ງໃຈຕັດສິນພວກທ່ານນອກ ຈາກມັນເປັນໄປຕາມສິ່ງທີ່ມີຈິງເທົ່ານັ້ນ—

16 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
17 *ກ* ຄມພ ເຄື່ອງໝາຍ.
18 *ກ* ອທ 12:12, 18.
19 *ກ* ຢຣ 15:22–24.
21 *ກ* ຢຣ 20:29; ຮຣ 11.
*ຂ* ຄມພ ຫວັງ, ຄວາມຫວັງ.
*ຄ* ອທ 12:6.
23 *ກ* ຢອ 2:28–29.
*ຂ* ມທ 11:25; ລກ 10:21; 3 ນຟ 26:14–16; ຄພ 128:18.

25 ເພາະ ຂ້າ ພະ ເຈົ້າ ບໍ່ ໄດ້ ໝາຍ ຄວາມ
ວ່າ ພວກ ທ່ານ ທຸກ ຄົນ ໄດ້ ຖືກ ບັງ ຄັບ ໃຫ້
ຖ່ອມຕົວ ເພາະຂ້າພະເຈົ້າເຊື່ອແທ້ໆວ່າ ມີ
ບາງຄົນໃນບັນດາພວກທ່ານທີ່ຈະຖ່ອມຕົວ
ບໍ່ວ່າພວກເຂົາຈະຢູ່ໃນສະພາບແບບໃດກໍ
ຕາມ.
26 ບັດ ນີ້, ດັ່ງ ທີ່ ຂ້າ ພະ ເຈົ້າ ໄດ້ ເວົ້າ ໄວ້
ກ່ຽວ ກັບສັດທາ—ວ່າມັນບໍ່ ແມ່ນຄວາມຮູ້
ອັນ ສົມ ບູນ—ຄຳ ເວົ້າ ຂອງ ຂ້າ ພະ ເຈົ້າ ກໍ
ເໝືອນ ກັນ. ທຳອິດພວກທ່ານ ຈະ ຮູ້ ເຖິງ
ຄວາມແນ່ນອນຂອງມັນຈົນສົມບູນບໍ່ໄດ້,
ເຊັ່ນດຽວກັນກັບສັດທາທີ່ບໍ່ແມ່ນຄວາມຮູ້
ອັນສົມບູນ.
27 ແຕ່ ຈົ່ງ ເບິ່ງ, ຖ້າ ຫາກ ພວກ ທ່ານ ຈະ
ຕື່ນ ແລະ ປຸກ ຄວາມສາ ມາດ ຂອງພວກ
ທ່ານ ຈົນມາຫາການທົດລອງຄຳເວົ້າຂອງ
ຂ້າພະເຈົ້າ ແລະ ໃຊ້ສັດທາຈັກໜ້ອຍໜຶ່ງ,
ແທ້ຈິງແລ້ວ, ຖ້າຫາກພວກທ່ານເຮັດບໍ່ໄດ້
ຫລາຍໄປກວ່າຄວາມປາດຖະໜາທີ່ຈະ
ເຊື່ອ, ກໍຂໍໃຫ້ [ກ]ຄວາມປາດຖະໜານີ້ເກີດ
ຜົນໃນພວກທ່ານ ຈົນວ່າພວກທ່ານຈະໃຫ້
ບ່ອນສຳລັບຄຳສ່ວນໜຶ່ງຂອງຂ້າພະເຈົ້າ
ໄດ້.
28 ບັດ ນີ້ພວກ ເຮົາ ຈະ ປຽບ ທຽບ ພຣະ
ຄຳໃສ່ກັບ [ກ]ເມັດພືດ. ບັດນີ້ຖ້າຫາກພວກ
ທ່ານ ໃຫ້ບ່ອນເພື່ອຈະປູກ [ຂ]ເມັດພືດ ໃນ
[ຄ]ໃຈຂອງພວກທ່ານ, ຈົ່ງເບິ່ງ, ຖ້າຫາກເປັນ
ເມັດພືດທີ່ແທ້ຈິງ ຫລື ເມັດທີ່ດີ, ຖ້າຫາກ
ພວກທ່ານບໍ່ໂຍນມັນຖິ້ມໂດຍ [ງ]ຄວາມບໍ່
ເຊື່ອຖືຂອງພວກທ່ານ, ວ່າພວກທ່ານຈະ
ຕໍ່ຕ້ານພຣະວິນຍານຂອງພຣະຜູ້ເປັນເຈົ້າ
ແລ້ວ, ຈົ່ງເບິ່ງ, ມັນຈະເລີ່ມພອງຢູ່ໃນເອິກ
ຂອງພວກທ່ານ, ແລະ ເມື່ອພວກທ່ານຮູ້ສຶກ
ເຖິງການພອງນີ້, ພວກທ່ານຈະເລີ່ມກ່າວຢູ່
ພາຍໃນຕົວເອງວ່າ—ມັນຕ້ອງເປັນເມັດດີ
ຫລື ວ່າພຣະຄຳນີ້ດີ ເພາະມັນເລີ່ມເຮັດໃຫ້
ຈິດວິນຍານຂອງເຮົາຂະຫຍາຍອອກ; ແທ້
ຈິງແລ້ວ, ມັນເລີ່ມເຮັດໃຫ້ [ຈ]ຄວາມເຂົ້າໃຈ
ຂອງເຮົາແຈ້ງອອກ, ແທ້ຈິງແລ້ວ, ມັນເລີ່ມ
ມີລົດແຊບສຳລັບເຮົາ.
29 ບັດນີ້ຈົ່ງເບິ່ງ, ສິ່ງນີ້ຈະບໍ່ເພີ່ມສັດທາ
ຂອງ ພວກ ທ່ານ ບໍ? ຂ້າ ພະ ເຈົ້າເວົ້າກັບ
ພວກທ່ານວ່າ, ແນ່ນອນ; ປານນັ້ນມັນຍັງບໍ່
ເຕີບໂຕເປັນຄວາມຮູ້ອັນສົມບູນ.
30 ແຕ່ຈົ່ງເບິ່ງ, ເມື່ອເມັດນັ້ນພອງ, ແລະ
ງອກ, ແລະ ເລີ່ມເຕີບໂຕຂຶ້ນ, ເມື່ອນັ້ນພວກ
ທ່ານຕ້ອງເວົ້າວ່າ ມັນແມ່ນເມັດດີ; ເພາະ
ຈົ່ງເບິ່ງ ມັນພອງ, ແລະ ງອກ, ແລະ ເລີ່ມ
ເຕີບໂຕຂຶ້ນ. ແລະ ບັດນີ້, ຈົ່ງເບິ່ງສິ່ງນີ້ຈະ
ບໍ່ເຮັດໃຫ້ສັດທາຂອງພວກທ່ານເຂັ້ມແຂງ
ຂຶ້ນບໍ? ແທ້ຈິງແລ້ວ, ມັນຈະເຮັດໃຫ້ສັດທາ
ຂອງພວກທ່ານເຂັ້ມແຂງຂຶ້ນ: ເພາະພວກ
ທ່ານຈະເວົ້າວ່າ ເຮົາຮູ້ແລ້ວວ່າມັນແມ່ນ
ເມັດດີ; ເພາະຈົ່ງເບິ່ງ ມັນງອກ ແລະ ເລີ່ມ
ເຕີບໂຕຂຶ້ນ.
31 ແລະ ບັດນີ້, ຈົ່ງເບິ່ງພວກທ່ານແນ່ໃຈ
ບໍວ່ານີ້ຄືເມັດດີ? ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ແມ່ນແລ້ວ; ເພາະທຸກເມັດໄດ້
ອອກຜົນໃນ [ກ]ລັກສະນະຂອງມັນເອງ.
32 ສະນັ້ນ, ຖ້າຫາກເມັດໃດເຕີບໂຕ ມັນ
ກໍຈະຕ້ອງເປັນເມັດດີ, ແຕ່ຖ້າຫາກມັນບໍ່
ເຕີບໂຕ, ຈົ່ງເບິ່ງ ມັນກໍຕ້ອງເປັນເມັດບໍ່ດີ,
ສະນັ້ນ ມັນຈຶ່ງຖືກໂຍນຖິ້ມໄປ.
33 ແລະ ບັດນີ້, ຈົ່ງເບິ່ງເພາະພວກທ່ານ
ໄດ້ພິສູດການທົດລອງ, ແລະ ໄດ້ປູກເມັດ
ນັ້ນ, ແລະ ມັນໄດ້ພອງ, ແລະ ງອກ, ແລະ

27 ກ ມຣກ 11:24.
28 ກ ແອວ 33:1.
ຂ ລກ 8:11.
ຄ ຄມພ ໃຈ.
ງ ມທ 17:20.
ຈ ຄມພ ເຂົ້າໃຈ,
ຄວາມເຂົ້າໃຈ.
31 ກ ປຖກ 1:11–12.

ເລີ່ມ ເຕີບ ໂຕ ຂຶ້ນ, ພວກ ທ່ານ ກໍ ຕ້ອງ ຮູ້ ວ່າ
ມັນແມ່ນເມັດດີ.
34 ແລະ ບັດນີ້, ຈົ່ງເບິ່ງ [ກ]ຄວາມຮູ້ຂອງ
ພວກທ່ານສົມບູນບໍ? ແທ້ຈິງແລ້ວ, ຄວາມຮູ້
ຂອງພວກທ່ານສົມບູນໃນເລື່ອງນັ້ນ, ແລະ
[ຂ]ສັດທາຂອງພວກທ່ານຄົງທີ່; ແລະ ເປັນ
ຍ້ອນພວກທ່ານຮູ້ ຊຶ່ງພວກທ່ານຮູ້ວ່າພຣະ
ຄຳເຮັດໃຫ້ຈິດວິນຍານ ຂອງ ພວກ ທ່ານ
ພອງ ຂຶ້ນ, ແລະ ພວກ ທ່ານ ຮູ້ ອີກ ວ່າ ມັນ
ງອກ ຂຶ້ນ, ແລະ ຄວາມ ເຂົ້າ ໃຈ ຂອງ ພວກ
ທ່ານ ເລີ່ມ ແຈ້ງ ອອກ ແລະ [ຄ]ຈິດ ໃຈ ຂອງ
ພວກທ່ານເລີ່ມຂະຫຍາຍອອກ.
35 ໂອ້ ດັ່ງນັ້ນແລ້ວ, ນີ້ບໍ່ແມ່ນຄວາມຈິງ
ບໍ? ຂ້າພະເຈົ້າກ່າວກັບພວກທ່ານວ່າ, ຖືກ
ແລ້ວ, ເພາະມັນຄື [ກ]ຄວາມສະຫວ່າງ; ແລະ
ອັນໃດກໍຕາມທີ່ເປັນຄວາມສະຫວ່າງຍ່ອມ
ດີ, ເພາະຫລິງເຫັນໄດ້, ສະນັ້ນ ພວກທ່ານ
ຕ້ອງຮູ້ວ່າມັນດີ; ແລະ ບັດນີ້ຈົ່ງເບິ່ງ, ຫລັງ
ຈາກ ພວກ ທ່ານ ໄດ້ ຊີມ ຄວາມ ສະຫວ່າງ
ນີ້ ແລ້ວ, ຄວາມ ຮູ້ ຂອງ ພວກ ທ່ານ ສົມບູນ
ແລ້ວບໍ?
36 ຈົ່ງ ເບິ່ງ ຂ້າ ພະ ເຈົ້າ ກ່າວ ກັບ ພວກ
ທ່ານວ່າ, ບໍ່ເລີຍ, ພວກທ່ານບໍ່ຄວນປະຖິ້ມ
ສັດທາຂອງພວກທ່ານ, ເພາະພວກທ່ານ
ພຽງແຕ່ໃຊ້ສັດທາຂອງພວກທ່ານເພື່ອປູກ
ເມັດ ເພື່ອພວກທ່ານຈະໄດ້ພິສູດການທົດ
ລອງໃຫ້ຮູ້ຖ້າຫາກມັນເປັນເມັດດີ.
37 ແລະ ຈົ່ງເບິ່ງ, ເມື່ອຕົ້ນເລີ່ມເຕີບໂຕ
ຂຶ້ນ, ພວກທ່ານຈະເວົ້າວ່າ: ຈົ່ງໃຫ້ພວກ
ເຮົາບຳລຸງລ້ຽງມັນດ້ວຍຄວາມເອົາໃຈໃສ່,
ເພື່ອມັນຈະແຕກຮາກ, ເພື່ອມັນຈະເຕີບໂຕ
ຂຶ້ນ, ແລະ ອອກຜົນໃຫ້ແກ່ພວກເຮົາ. ແລະ
ບັດນີ້ຈົ່ງເບິ່ງ, ຖ້າຫາກພວກທ່ານບຳລຸງ
ລ້ຽງມັນດ້ວຍຄວາມເອົາໃຈໃສ່, ມັນກໍຈະ
ແຕກຮາກ, ແລະ ເຕີບໂຕຂຶ້ນ, ແລະ ອອກ
ຜົນ.
38 ແຕ່ຖ້າຫາກພວກທ່ານຈະ [ກ]ລະເລີຍ
ຕົ້ນ ນັ້ນ, ແລະ ບໍ່ຄິດເຖິງການບຳລຸງລ້ຽງ
ມັນ, ຈົ່ງເບິ່ງ ມັນກໍຈະບໍ່ ແຕກຮາກເລີຍ;
ແລະ ເມື່ອຄວາມຮ້ອນຂອງດວງຕາເວັນມາ
ເຖິງ ແລະ ເຜົາມັນ, ເມື່ອມັນບໍ່ມີຮາກ ມັນ
ຍ່ອມຫ່ຽວແຫ້ງໄປ, ແລະ ພວກທ່ານກໍຈະ
ຖອນມັນຂຶ້ນ ແລະ ໂຍນມັນຖິ້ມໄປ.
39 ບັດນີ້, ມັນບໍ່ແມ່ນວ່າ ເພາະເມັດບໍ່ດີ,
ທັງບໍ່ແມ່ນວ່າຜົນຂອງມັນບໍ່ເປັນທີ່ປາດຖະ
ໜາ; ແຕ່ເປັນເພາະ [ກ]ດິນຂອງພວກທ່ານ
ແຫ້ງແລ້ງ, ແລະ ພວກທ່ານບໍ່ຍອມບຳລຸງ
ລ້ຽງຕົ້ນນັ້ນ, ສະນັ້ນ ພວກທ່ານຈຶ່ງບໍ່ໄດ້ຮັບ
ຜົນຈາກມັນ.
40 ແລະ ດ້ວຍ ເຫດ ນີ້, ຖ້າ ຫາກ ພວກ
ທ່ານບໍ່ບຳລຸງລ້ຽງພຣະຄຳ, ໂດຍຄອງຄອຍ
ໝາກຂອງຕົ້ນດ້ວຍຕາແຫ່ງສັດທາ, ແລ້ວ
ພວກທ່ານຈະເກັບໝາກຂອງ [ກ]ຕົ້ນໄມ້ແຫ່ງ
ຊີວິດບໍ່ໄດ້ເລີຍ.
41 ແຕ່ຖ້າຫາກພວກທ່ານຈະບຳລຸງລ້ຽງ
ພຣະຄຳ, ແທ້ຈິງແລ້ວ, ບຳລຸງລ້ຽງຕົ້ນເມື່ອ
ມັນ ເລີ່ມ ເຕີບ ໂຕ ໂດຍ ສັດທາ ຂອງ ພວກ
ທ່ານ ດ້ວຍ ຄວາມ ພາກພຽນ, ແລະ ດ້ວຍ
[ກ]ຄວາມອົດທົນ, ໂດຍຄອງຄອຍຜົນຈາກ
ຕົ້ນນັ້ນ, ແລ້ວມັນຈະແຕກຮາກ; ແລະ ຈົ່ງ
ເບິ່ງ ມັນຈະເປັນຕົ້ນທີ່ [ຂ]ງອກງາມໄປສູ່ຊີ
ວິດອັນເປັນນິດ.

34 *ກ* ຄມພ ຄວາມຮູ້.
*ຂ* ອທ 3:19.
*ຄ* ຄມພ ຈິດໃຈ.
35 *ກ* ຢຮ 3:18–21.
ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
38 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
39 *ກ* ມທ 13:5.
40 *ກ* ປຖກ 2:9; 1 ນຟ 15:36.
41 *ກ* ຄມພ ອົດທົນ, ຄວາມອົດທົນ.
*ຂ* ແອວ 33:23; ຄພ 63:23.

42 ແລະ ເພາະ [ກ]ຄວາມ ພາກ ພຽນ ຂອງ
ພວກ ທ່ານ ແລະ ສັດທາ ຂອງ ພວກ ທ່ານ
ແລະ ດ້ວຍ ຄວາມ ອົດ ທົນ ຂອງ ພວກ ທ່ານ
ໃນ ການ ບຳ ລຸງ ລ້ຽງ ພຣະ ຄຳ, ເພື່ອ ມັນ ຈະ
ໄດ້ແຕກຮາກຢູ່ໃນພວກທ່ານ, ຈົ່ງເບິ່ງ, ໃນ
ບໍ່ຊ້ານີ້ພວກທ່ານຈະເກັບ [ຂ]ໝາກຂອງມັນ
ໄດ້ ຊຶ່ງ ມີຄ່າທີ່ສຸດ, ຊຶ່ງ ຫວານ ເໜືອກວ່າ
ທຸກສິ່ງທີ່ຫວານ, ແລະ ຂາວເໜືອກວ່າທຸກ
ສິ່ງທີ່ຂາວ, ແທ້ຈິງແລ້ວ, ແລະ ບໍລິສຸດເໜືອ
ກວ່າທຸກສິ່ງທີ່ບໍລິສຸດ; ແລະ ພວກທ່ານຈະ
ອີ່ມໜຳສຳລານດ້ວຍໝາກໄມ້ນີ້ ເພື່ອພວກ
ທ່ານຈະບໍ່ຫິວທັງບໍ່ກະຫາຍ.
43 ເມື່ອ ນັ້ນ ພີ່ ນ້ອງ ຂອງ ຂ້າ ພະ ເຈົ້າ,
ພວກທ່ານຈະເກັບກ່ຽວລາງວັນແຫ່ງສັດທາ
ແລະ ຄວາມພາກພຽນ, ແລະ ຄວາມອົດ
ທົນ, ແລະ ຄວາມອົດກັ້ນຂອງພວກທ່ານ
ໂດຍ ໄດ້ ຄອຍ ຖ້າ ໃຫ້ ຕົ້ນ ໄມ້ ອອກ ຜົນ ໃຫ້
ພວກທ່ານ.

## ບົດທີ 33

*ຊີ ນັດ ໄດ້ ສິດ ສອນ ວ່າ ມະນຸດ ຄວນ ອະ ທິ
ຖານ ແລະ ນະມັດສະການ ໃນທຸກສະຖານ
ທີ່, ແລະ ເປັນຍ້ອນພຣະບຸດ ການພິພາກ
ສາຈະຖືກເອົາໜີໄປ—ຊີໂນກໄດ້ສິດສອນ
ວ່າ ເປັນຍ້ອນພຣະບຸດ ພວກເຮົາຈຶ່ງໄດ້ຮັບ
ຄວາມເມດຕາ—ໂມເຊໄດ້ຍົກແບບສະບັບ
ຂອງພຣະບຸດຂອງພຣະເຈົ້າຂຶ້ນ ໃນຖິ່ນ
ແຫ້ງແລ້ງກັນດານ. ປະມານ 74 ປີ ກ່ອນ
ຄ.ສ.*

1 ບັດ ນີ້ ຫລັງ ຈາກ ແອວມາ ໄດ້ ເວົ້າ ຂໍ້
ຄວາມ ເຫລົ່ານີ້ແລ້ວ, ຄົນທັງຫລາຍໄດ້ສົ່ງ
ຄຳຖາມມາຫາເພິ່ນ ໂດຍປາດຖະໜາຢາກ
ຮູ້ຈັກວ່າ ພວກເຂົາຄວນເຊື່ອຖືໃນ [ກ]ພຣະ
ເຈົ້າອົງດຽວຫລືບໍ່, ເພື່ອວ່າພວກເຂົາຈະ
ໄດ້ຮັບໝາກຜົນຈາກສິ່ງທີ່ເພິ່ນເວົ້າໄປນັ້ນ,
ຫລື ວ່າພວກເຂົາຈະປູກ [ຂ]ເມັດພືດໄດ້ດ້ວຍ
ວິທີໃດ, ຫລື ວ່າພຣະຄຳຈາກສິ່ງທີ່ເພິ່ນ
ໄດ້ເວົ້າເຖິງນັ້ນຈະຕ້ອງປູກໄວ້ໃນໃຈຂອງ
ພວກເຂົາດ້ວຍວິທີໃດ; ຫລື ວ່າພວກເຂົາ
ຈະເລີ່ມສະແດງສັດທາຂອງພວກເຂົາດ້ວຍ
ວິທີໃດ.
2 ແລະ ແອວມາ ໄດ້ ເວົ້າ ກັບ ພວກ ເຂົາ
ວ່າ: ຈົ່ງເບິ່ງ, ພວກທ່ານເວົ້າວ່າ ພວກທ່ານ
[ກ]ບໍ່ສາມາດນະມັດສະການພຣະເຈົ້າຂອງ
ພວກທ່ານ ເພາະວ່າພວກທ່ານໄດ້ຖືກຂັບ
ໄລ່ອອກຈາກທຳມະສາລາຂອງພວກທ່ານ.
ແຕ່ວ່າຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກ
ທ່ານວ່າ ຖ້າຫາກພວກທ່ານຄິດວ່າ ພວກ
ທ່ານນະມັດສະການພຣະເຈົ້າບໍ່ໄດ້, ແລ້ວ
ພວກ ທ່ານ ກໍ ເຮັດ ຜິດ ຢ່າງ ໃຫຍ່ ຫລວງ,
ແລະ ພວກທ່ານຄວນຈະຄົ້ນຄວ້າ [ຂ]ພຣະ
ຄຳພີ; ຖ້າຫາກມັນສິດສອນພວກທ່ານໃນ
ເລື່ອງນີ້, ພວກທ່ານກໍບໍ່ເຂົ້າໃຈມັນ.
3 ພວກທ່ານຈື່ຈຳໄດ້ບໍ ຊຶ່ງພວກທ່ານໄດ້
ອ່ານເລື່ອງທີ່ [ກ]ຊີນັດ, ຜູ້ປະກາດພຣະທຳ
ໃນສະໄໝບູຮານ, ກ່ຽວກັບການອະທິຖານ
ຫລື [ຂ]ການນະມັດສະການ?
4 ເພາະ ເພິ່ນ ໄດ້ເວົ້າວ່າ: ພຣະອົງເມດ
ຕາປານີ, ໂອ້ ພຣະອົງເຈົ້າ, ເພາະວ່າພຣະ
ອົງໄດ້ຍິນຄຳອະທິຖານຂອງຂ້ານ້ອຍ ເຖິງ
ແມ່ນເວລາຂ້ານ້ອຍຢູ່ໃນຖິ່ນແຫ້ງແລ້ງກັນ
ດານ; ແທ້ຈິງແລ້ວ, ພຣະອົງເມດຕາປານີ
ເວລາຂ້ານ້ອຍອະທິຖານກ່ຽວກັບຜູ້ທີ່ເປັນ

42 *ກ* ຄມພ ພາກພຽນ, ຄວາມພາກພຽນ.
*ຂ* 1 ນຟ 8:10–12.
**33** 1 *ກ* 2 ນຟ 31:21; ມຊຢ 15:2–4.
*ຂ* ແອວ 32:28–43.
2 *ກ* ແອວ 32:5.
*ຂ* ແອວ 37:3–10.
3 *ກ* ຄມພ ຊີນັດ; ພຣະຄຳພີ—ພຣະຄຳພີທີ່ສູນເສຍໄປ.
*ຂ* ຄມພ ນະມັດສະການ.

[ກ]ສັດຕູຂອງຂ້ານ້ອຍ, ແລະ ພຣະອົງໄດ້ສົ່ງ
ພວກເຂົາມາໃຫ້ຂ້ານ້ອຍ.
5 ແທ້ຈິງແລ້ວ, ໂອ້ ພຣະອົງເຈົ້າ, ແລະ
ພຣະອົງເມດຕາປານີຂ້ານ້ອຍ ເວລາຂ້າ
ນ້ອຍໄດ້ຮ້ອງທູນຕໍ່ພຣະອົງໃນ [ກ]ທົ່ງຂອງ
ຂ້ານ້ອຍ; ເວລາຂ້ານ້ອຍຮ້ອງທູນຕໍ່ພຣະ
ອົງໃນຄຳອະທິຖານຂອງຂ້ານ້ອຍ, ແລະ
ພຣະອົງກໍໄດ້ຍິນຂ້ານ້ອຍສະເໝີ.
6 ແລະ ອີກເທື່ອໜຶ່ງ, ໂອ້ ພຣະອົງເຈົ້າ,
ເວລາທີ່ຂ້ານ້ອຍໄດ້ກັບບ້ານຂອງຂ້ານ້ອຍ
ພຣະອົງກໍໄດ້ຍິນຄຳອະທິຖານຂອງຂ້າ
ນ້ອຍ.
7 ແລະ ເວລາຂ້ານ້ອຍເຂົ້າໄປໃນ [ກ]ຫ້ອງ
ຂອງຂ້ານ້ອຍ, ໂອ້ ພຣະຜູ້ເປັນເຈົ້າ, ແລະ
ອະທິຖານຫາພຣະອົງ, ພຣະອົງກໍໄດ້ຍິນ
ສຽງຂອງຂ້ານ້ອຍ.
8 ແທ້ຈິງແລ້ວ, ພຣະອົງເມດຕາປານີ
ລູກຫລານຂອງພຣະອົງ ເວລາທີ່ພວກເຂົາ
ຮ້ອງທູນຕໍ່ພຣະອົງ, ເພື່ອຈະໄດ້ຍິນຈາກ
ພຣະອົງ ແລະ ບໍ່ແມ່ນຈາກມະນຸດ, ແລະ
ພຣະອົງຈະໄດ້ຍິນພວກເຂົາ.
9 ແທ້ຈິງແລ້ວ, ໂອ້ ພຣະອົງເຈົ້າ, ພຣະ
ອົງເມດຕາປານີຂ້ານ້ອຍມາຕະຫລອດ,
ແລະ ໄດ້ຍິນສຽງເອີ້ນຫາຂອງຂ້ານ້ອຍໃນ
ທ່າມກາງບ່ອນຊຸມນຸມຂອງພຣະອົງ.
10 ແທ້ຈິງແລ້ວ, ແລະ ພຣະອົງໄດ້ຍິນ
ຂ້ານ້ອຍອີກ ເວລາທີ່ຂ້ານ້ອຍຖືກ [ກ]ຂັບໄລ່
ອອກໄປ ແລະ ຖືກສັດຕູຂອງຂ້ານ້ອຍໝິ່ນ
ປະໝາດ; ແທ້ຈິງແລ້ວ, ພຣະອົງໄດ້ຍິນສຽງ
ເອີ້ນຫາຂອງຂ້ານ້ອຍ, ແລະ ພຣະພິໂລດ
ກັບສັດຕູຂອງຂ້ານ້ອຍ, ແລະ ພຣະອົງໄດ້
ສະເດັດມາຢ້ຽມຢາມພວກເຂົາໃນພຣະພິ
ໂລດຂອງພຣະອົງ ດ້ວຍຄວາມພິນາດຢ່າງ
ວ່ອງໄວ.
11 ແລະ ພຣະອົງໄດ້ຍິນຂ້ານ້ອຍຍ້ອນ
ວ່າ ຄວາມທຸກ ແລະ ຄວາມຈິງໃຈຂອງຂ້າ
ນ້ອຍ; ແລະ ເປັນຍ້ອນພຣະບຸດຂອງພຣະ
ອົງທີ່ເມດຕາປານີຂ້ານ້ອຍມາດັ່ງນີ້, ສະນັ້ນ
ຂ້ານ້ອຍຈະເອີ້ນຫາພຣະອົງໃນຄວາມທຸກ
ທັງໝົດຂອງຂ້ານ້ອຍ, ເພາະວ່າຄວາມສຸກ
ຂອງຂ້ານ້ອຍຢູ່ໃນພຣະອົງ, ເພາະພຣະອົງ
ຫັນການພິພາກສາຂອງພຣະອົງໄປຈາກ
ຂ້ານ້ອຍ ເພາະພຣະບຸດຂອງພຣະອົງ.
12 ແລະ ບັດນີ້ແອວມາໄດ້ເວົ້າກັບພວກ
ເຂົາວ່າ: ພວກທ່ານເຊື່ອຖື [ກ]ພຣະຄຳພີ
ເຫລົ່ານັ້ນ ຊຶ່ງຄົນສະໄໝກ່ອນໄດ້ຂຽນໄວ້
ບໍ?
13 ຈົ່ງ ເບິ່ງ, ຖ້າ ຫາກ ພວກ ທ່ານ ເຊື່ອ,
ພວກທ່ານຄວນເຊື່ອເລື່ອງທີ່ [ກ]ຊີນັດໄດ້ເວົ້າ
ໄວ້; ເພາະຈົ່ງເບິ່ງ ເພິ່ນໄດ້ເວົ້າວ່າ: ພຣະ
ອົງໄດ້ເອົາການພິພາກສາຂອງພຣະອົງໄປ
ເພາະພຣະບຸດຂອງພຣະອົງ.
14 ບັດ ນີ້ ຈົ່ງ ເບິ່ງ, ພີ່ ນ້ອງ ຂອງ ຂ້າ ພະ
ເຈົ້າ, ຂ້າພະເຈົ້າຂໍຖາມພວກທ່ານວ່າ ພວກ
ທ່ານອ່ານພຣະຄຳພີບໍ? ຖ້າຫາກພວກທ່ານ
ອ່ານ, ແລ້ວພວກທ່ານບໍ່ເຊື່ອພຣະບຸດຂອງ
ພຣະເຈົ້າໄດ້ແນວໃດ?
15 ເພາະວ່າມັນ [ກ]ບໍ່ໄດ້ຂຽນວ່າຊີນັດຜູ້
ດຽວທີ່ເວົ້າເຖິງເລື່ອງເຫລົ່ານີ້, ແຕ່ວ່າ [ຂ]ຊີ
ໂນກກໍໄດ້ເວົ້າເຖິງເລື່ອງເຫລົ່ານີ້ຄືກັນ—
16 ເພາະຈົ່ງເບິ່ງ, ເພິ່ນໄດ້ເວົ້າວ່າ: ໂອ້
ພຣະຜູ້ເປັນເຈົ້າ, ພຣະອົງພຣະພິໂລດຜູ້
ຄົນພວກນີ້, ຍ້ອນວ່າພວກເຂົາບໍ່ຍອມເຂົ້າ
ໃຈໃນຄວາມເມດຕາປານີຂອງພຣະອົງ

4 ກ ມທ 5:44.
5 ກ ແອວ 34:20–25.
7 ກ ມທ 6:5–6; ແອວ 34:26.
10 ກ ແອວ 32:5.
12 ກ ຄມພ ພຣະຄຳພີ.
13 ກ ແອວ 34:7.
15 ກ ຢຄ 4:4.
ຂ 1 ນຟ 19:10; ແອວ 34:7.

ຊຶ່ງພຣະອົງໄດ້ປະທານໃຫ້ແກ່ພວກເຂົາ
ເພາະພຣະບຸດຂອງພຣະອົງ.
17 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ພວກທ່ານເຫັນວ່າ ສາດສະດາຜູ້ທີສອງໃນ
ສະໄໝກ່ອນໄດ້ໃຫ້ຖ້ອຍຄຳເຖິງພຣະບຸດ
ຂອງພຣະເຈົ້າ, ແລະ ຍ້ອນວ່າຜູ້ຄົນບໍ່ຍອມ
ເຂົ້າໃຈຄຳເວົ້າຂອງເພິ່ນ, ພວກເຂົາຈຶ່ງ
[ກ]ແກວ່ງກ້ອນຫີນໃສ່ເພິ່ນຈົນເຖິງແກ່ຄວາມ
ຕາຍ.
18 ແຕ່ ຈົ່ງເບິ່ງ, ນີ້ຍັງບໍ່ທັນໝົດ; ບໍ່ມີແຕ່
ພວກເພິ່ນເທົ່ານັ້ນທີ່ໄດ້ເວົ້າກ່ຽວກັບພຣະ
ບຸດຂອງພຣະເຈົ້າ.
19 ຈົ່ງເບິ່ງ, [ກ]ໂມເຊກໍໄດ້ເວົ້າເຖິງພຣະ
ອົງ; ແທ້ຈິງແລ້ວ, ແລະ ຈົ່ງເບິ່ງ [ຂ]ແບບ
ສະບັບຖືກ [ຄ]ຍົກຂຶ້ນໃນຖິ່ນແຫ້ງແລ້ງກັນ
ດານ ວ່າຜູ້ໃດກໍຕາມທີ່ຫລຽວເບິ່ງມັນຈະ
ໄດ້ມີຊີວິດ. ແລະ ມີຫລາຍຄົນໄດ້ຫລຽວ
ເບິ່ງ ແລະ ມີຊີວິດ.
20 ແຕ່ວ່າມີຄົນພຽງເລັກໜ້ອຍເທົ່ານັ້ນທີ່
ເຂົ້າໃຈເຖິງຄວາມໝາຍຂອງສິ່ງເຫລົ່ານັ້ນ,
ແລະ ນີ້ກໍຍ້ອນຄວາມແຂງກະດ້າງຂອງໃຈ
ຂອງພວກເຂົາ. ແຕ່ມີຫລາຍຄົນທີ່ໃຈແຂງ
ກະດ້າງຫລາຍຈົນວ່າພວກເຂົາບໍ່ຫລຽວ
ເບິ່ງ, ສະນັ້ນ ພວກເຂົາຈຶ່ງຕາຍ. ບັດນີ້ເຫດ
ຜົນທີ່ພວກເຂົາບໍ່ຫລຽວເບິ່ງກໍຄື ພວກເຂົາ
ບໍ່ເຊື່ອວ່າມັນຈະ [ກ]ປິ່ນປົວພວກເຂົາໄດ້.
21 ໂອ້ ພີ່ນ້ອງຂອງຂ້າພະເຈົ້າ, ຖ້າຫາກ
ພວກທ່ານຈະຖືກປິ່ນປົວໄດ້ ໂດຍພຽງແຕ່
ຫລຽວເບິ່ງ ພວກທ່ານກໍຖືກປິ່ນປົວແລ້ວ,
ພວກທ່ານຈະບໍ່ຫລຽວເບິ່ງໂລດບໍ, ຫລື ວ່າ
ພວກທ່ານຈະເຮັດໃຈແຂງກະດ້າງຢູ່ໃນ
ຄວາມບໍ່ເຊື່ອຖື, ແລະ ເມີນເສີຍບໍ່ຍອມ
ຫລຽວໄປເບິ່ງເລີຍ, ຈົນວ່າພວກທ່ານຕາຍ
ໄປ?
22 ຖ້າຫາກເປັນດັ່ງນັ້ນວິບັດຈະມາເຖິງ
ພວກທ່ານ; ແຕ່ຖ້າຫາກບໍ່ເປັນດັ່ງນັ້ນ ກໍຈົ່ງ
ຫລຽວເບິ່ງ, ແລະ [ກ]ເລີ່ມເຊື່ອຖືໃນພຣະບຸດ
ຂອງພຣະເຈົ້າ, ວ່າພຣະອົງຈະສະເດັດມາ
ໄຖ່ຜູ້ຄົນຂອງພຣະອົງ, ແລະ ວ່າພຣະອົງ
ຈະຮັບເອົາຄວາມເຈັບປວດ ແລະ ສິ້ນພຣະ
ຊົນເພື່ອ [ຂ]ຊົດໃຊ້ແທນບາບຂອງພວກເຂົາ,
ແລະ ວ່າພຣະອົງຈະ [ຄ]ລຸກຂຶ້ນຈາກຄວາມ
ຕາຍອີກ, ຊຶ່ງຈະເຮັດໃຫ້ເກີດ [ງ]ການຟື້ນຄືນ
ຊີວິດ, ເພື່ອຄົນທັງປວງຈະໄດ້ຢືນຢູ່ຕໍ່ພຣະ
ພັກຂອງພຣະອົງ, ເພື່ອຮັບການພິພາກສາ
ໃນມື້ສຸດທ້າຍ ແລະ ເປັນມື້ພິພາກສາ, ຕາມ
[ຈ]ວຽກງານຂອງພວກເຂົາ.
23 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຂ້າພະເຈົ້າຂໍໃຫ້ພວກທ່ານ [ກ]ປູກພຣະຄຳນີ້
ໄວ້ໃນໃຈຂອງພວກທ່ານ, ເພື່ອມັນຈະໄດ້
[ຂ]ງອກງາມຂຶ້ນມາ ແລະ ຈົ່ງບຳລຸງມັນດ້ວຍ
ສັດທາຂອງພວກທ່ານ. ແລະ ຈົ່ງເບິ່ງ, ມັນ
ຈະກັບກາຍເປັນຕົ້ນງອກງາມຂຶ້ນໃນພວກ
ທ່ານຈົນເຖິງຊີວິດອັນເປັນນິດ. ແລະ ເມື່ອ
ນັ້ນ ຂໍໃຫ້ພຣະເຈົ້າຈົ່ງໂປດປະທານໃຫ້
[ຄ]ພາລະຂອງພວກທ່ານເບົາບາງລົງ, ໂດຍ
ທາງຄວາມສຸກຂອງພຣະບຸດຂອງພຣະອົງ.
ແລະ ພວກທ່ານສາມາດເຮັດສິ່ງທັງໝົດນີ້
ໄດ້ຖ້າຫາກພວກທ່ານຕັ້ງໃຈຈະເຮັດມັນ.
ອາແມນ.

17 *ກ* ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
19 *ກ* ພບຍ 18:15, 18; ແອວ 34:7.
*ຂ* ຈບຊ 21:9; 2 ນຟ 25:20; ມຊຍ 3:15.
*ຄ* ຢຮ 3:14; ຣລມ 8:14–15.
20 *ກ* 1 ນຟ 17:40–41.
22 *ກ* ແອວ 32:27–28.
*ຂ* ແອວ 22:14; 34:8–9.
*ຄ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ງ* ແອວ 11:44.
*ຈ* ຄມພ ວຽກງານ.
23 *ກ* ແອວ 33:1; 34:4.
*ຂ* ແອວ 32:41; ຄພ 63:23.
*ຄ* ແອວ 31:38.

## ບົດທີ 34

*ແອມມິວເລັກໃຫ້ຖ້ອຍຄຳວ່າ ພຣະຄຳຢູ່ໃນ
ພຣະຄຣິດນຳໄປສູ່ຄວາມລອດ—ມະນຸດ
ທຸກຄົນຈະຕ້ອງຕາຍເວັ້ນເສຍແຕ່ຈະມີການ
ຊົດໃຊ້ເກີດຂຶ້ນ—ກົດທັງໝົດຂອງໂມເຊຊີ້
ໄປຫາການເສຍສະລະຂອງພຣະບຸດຂອງ
ພຣະເຈົ້າ—ແຜນແຫ່ງການໄຖ່ນິລັນດອນ
ຂຶ້ນຢູ່ກັບສັດທາ ແລະ ການກັບໃຈ—ຈົ່ງອະ
ທິຖານສຳລັບພອນທາງໂລກ ແລະ ທາງວິນ
ຍານ—ຊີວິດນີ້ເປັນເວລາຂອງມະນຸດທີ່ຈະ
ຕຽມພ້ອມເພື່ອພົບກັບພຣະເຈົ້າ—ຈົ່ງທຳ
ງານເພື່ອຄວາມລອດຂອງພວກທ່ານດ້ວຍ
ຄວາມຢ້ານກົວຢູ່ຕໍ່ພຣະພັກຂອງພຣະເຈົ້າ.
ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກແອວມາໄດ້ເວົ້າຂໍ້ຄວາມເຫລົ່າ
ນີ້ກັບພວກເຂົາແລ້ວ ເພິ່ນກໍນັ່ງລົງເທິງພື້ນ
ດິນ ແລະ [ກ]ແອມມິວເລັກໄດ້ລຸກຂຶ້ນ ແລະ
ເລີ່ມຕົ້ນສິດສອນພວກເຂົາ, ມີຄວາມວ່າ:

2 ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າຄິດ
ວ່າມັນຈະເປັນໄປບໍ່ໄດ້ທີ່ພວກທ່ານຈະບໍ່
ຮູ້ເລື່ອງ ຊຶ່ງໄດ້ບັນທຶກໄວ້ກ່ຽວກັບການສະ
ເດັດມາຂອງພຣະຄຣິດ, ຜູ້ຊຶ່ງພວກເຮົາສິດ
ສອນວ່າ ພຣະອົງເປັນພຣະບຸດຂອງພຣະ
ເຈົ້າ; ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າພວກ
ທ່ານໄດ້ຮັບການສິດສອນກ່ຽວກັບ [ກ]ເລື່ອງ
ເຫລົ່ານີ້ຢ່າງກວ້າງຂວາງກ່ອນພວກທ່ານ
ໄດ້ແຍກອອກໄປຈາກພວກເຮົາ.

3 ແລະ ໂດຍທີ່ພວກທ່ານປາດຖະໜາ
ຈາກອ້າຍທີ່ຮັກຂອງຂ້າພະເຈົ້າໃຫ້ເພິ່ນ
ເຮັດໃຫ້ເປັນທີ່ຮູ້ແກ່ພວກທ່ານ ພວກທ່ານ
ຄວນເຮັດແນວໃດ, ເພາະຄວາມທຸກຂອງ
ພວກທ່ານ; ແລ້ວເພິ່ນໄດ້ເວົ້າກັບພວກທ່ານ
ບາງຢ່າງເພື່ອຕຽມຈິດໃຈຂອງພວກທ່ານ
ໄວ້; ແທ້ຈິງແລ້ວ, ເພິ່ນໄດ້ຊັກຊວນພວກ
ທ່ານໃຫ້ມີສັດທາ ແລະ ຄວາມອົດທົນ—

4 ແທ້ຈິງແລ້ວ, ເຖິງແມ່ນໃຫ້ພວກທ່ານມີ
ສັດທາຢ່າງຫລວງຫລາຍຈົນ [ກ]ຝັງພຣະຄຳ
ໄວ້ໃນໃຈຂອງພວກທ່ານ, ເພື່ອພວກທ່ານ
ຈະໄດ້ພິສູດການທົດລອງຄວາມດີຂອງມັນ.

5 ແລະ ພວກເຮົາເຫັນຄຳຖາມອັນໃຫຍ່
ຍິ່ງຊຶ່ງຢູ່ໃນຈິດໃຈຂອງພວກທ່ານຄືວ່າ
ພຣະຄຳດຳລົງຢູ່ໃນພຣະບຸດຂອງພຣະເຈົ້າ
ຫລືບໍ່ ຫລື ຈະມີພຣະຄຣິດຫລືບໍ່?

6 ແລະ ພວກທ່ານຫລຽວເຫັນອີກວ່າ
ອ້າຍຂອງຂ້າພະເຈົ້າໄດ້ພິສູດຕໍ່ພວກທ່ານ
ຫລາຍເທື່ອແລ້ວ, ວ່າ [ກ]ພຣະຄຳຢູ່ໃນພຣະ
ຄຣິດນຳໄປສູ່ຄວາມລອດ.

7 ອ້າຍຂອງຂ້າພະເຈົ້າໄດ້ເວົ້າເຖິງຄຳ
ເວົ້າຂອງຊີນັດ, ວ່າການໄຖ່ມາເຖິງໂດຍ
ທາງພຣະບຸດຂອງພຣະເຈົ້າ, ແລະ ໄດ້ເວົ້າ
ເຖິງຄຳເວົ້າຂອງຊີໂນກນຳອີກ; ແລະ ເພິ່ນ
ໄດ້ອ້າງເຖິງໂມເຊນຳອີກ, ເພື່ອພິສູດວ່າ
ເລື່ອງເຫລົ່ານີ້ຈິງ.

8 ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າຈະ
[ກ]ໃຫ້ຖ້ອຍຄຳແກ່ພວກທ່ານດ້ວຍຕົວເອງ
ວ່າ ສິ່ງເຫລົ່ານີ້ເປັນຄວາມຈິງ. ຈົ່ງເບິ່ງ, ຂ້າ
ພະເຈົ້າເວົ້າກັບພວກທ່ານ, ວ່າຂ້າພະເຈົ້າ
ຮູ້ວ່າພຣະຄຣິດຈະສະເດັດມາໃນບັນດາ
ລູກຫລານມະນຸດ, ເພື່ອຮັບເອົາການລ່ວງ
ລະເມີດຂອງຜູ້ຄົນຂອງພຣະອົງ, ແລະ ວ່າ
ພຣະອົງຈະ [ຂ]ຊົດໃຊ້ແທນບາບຂອງໂລກ;
ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວໄວ້ດັ່ງນີ້.

9 ເພາະມັນສົມຄວນທີ່ຈະມີ [ກ]ການຊົດ
ໃຊ້; ເພາະຕາມ [ຂ]ແຜນອັນຍິ່ງໃຫຍ່ຂອງ

**34** 1*ກ* ແອວ 8:21.
2*ກ* ແອວ 16:13–21.
4*ກ* ແອວ 33:23.
6*ກ* ຢຣ 1:1, 14.
8*ກ* ຄມພ ເປັນພະຍານ.
*ຂ* ຄມພ ຊົດໃຊ້, ການຊົດໃຊ້.
9*ກ* ແອວ 33:22.
*ຂ* ແອວ 12:22–33;
ມຊ 6:62.

ພຣະເຈົ້າຜູ້ສະຖິດນິລັນດອນ ແລ້ວມັນຈະ
ຕ້ອງມີການຊົດໃຊ້ເກີດຂຶ້ນ, ຖ້າບໍ່ດັ່ງນັ້ນ
ມະນຸດຊາດທັງປວງຕ້ອງຕາຍຢ່າງຫລີກ
ລ້ຽງບໍ່ໄດ້; ແທ້ຈິງແລ້ວ, ຄົນທັງປວງມີຈິດ
ໃຈແຂງກະດ້າງ; ແທ້ຈິງແລ້ວ, ຄົນທັງປວງ
[ຄ]ຕົກ ແລະ ຫລົງທາງໄປ, ແລະ ຕ້ອງຕາຍ
ເວັ້ນເສຍແຕ່ຈະເປັນໂດຍທາງການຊົດໃຊ້
ຊຶ່ງສົມຄວນທີ່ຈະມີຂຶ້ນ.
10 ເພາະມັນສົມຄວນທີ່ຈະມີ [ກ]ການເສຍ
ສະລະຄັ້ງຍິ່ງໃຫຍ່ ແລະ ຄັ້ງສຸດທ້າຍ; ແທ້
ຈິງແລ້ວ, ບໍ່ແມ່ນການຖວາຍມະນຸດ, ຫລື
ສັດ, ຫລື ສັດມີປີກຊະນິດໃດໆເປັນເຄື່ອງ
ບູຊາ; ເພາະຈະບໍ່ມີການຖວາຍມະນຸດເປັນ
ເຄື່ອງບູຊາ; ແຕ່ມັນຕ້ອງເປັນ [ຂ]ການເສຍ
ສະລະອັນ [ຄ]ບໍ່ມີຂອບເຂດ ແລະ ນິລັນ
ດອນ.
11 ບັດນີ້ບໍ່ມີຜູ້ໃດເລີຍທີ່ຈະເສຍສະລະ
ເລືອດເນື້ອຂອງຕົນເອງ ເພື່ອຊົດໃຊ້ແທນ
ບາບຂອງຄົນອື່ນ. ບັດນີ້, ຖ້າຫາກຜູ້ໃດ
ເປັນຄາດຕະກອນ, ຈົ່ງເບິ່ງ ກົດໝາຍຂອງ
ພວກເຮົາ, ຊຶ່ງ [ກ]ທ່ຽງທຳ, ຈະເອົາຊີວິດຂອງ
ນ້ອງຂອງເຂົາບໍ? ຂ້າພະເຈົ້າເວົ້າກັບພວກ
ທ່ານວ່າ, ບໍ່ເລີຍ.
12 ແຕ່ກົດໝາຍຕ້ອງການຊີວິດຂອງເຂົາ
ຜູ້ໄດ້ [ກ]ທຳການຄາດຕະກຳ; ສະນັ້ນ ຈະບໍ່
ມີສິ່ງໃດທີ່ໜ້ອຍກວ່າການຊົດໃຊ້ອັນບໍ່ມີ
ຂອບເຂດ ຊຶ່ງຈະມີພຽງພໍສຳລັບບາບຂອງ
ໂລກ.
13 ສະນັ້ນ, ມັນຈຶ່ງສົມຄວນທີ່ຈະມີການ
ເສຍສະລະຄັ້ງຍິ່ງໃຫຍ່ ແລະ ຄັ້ງສຸດທ້າຍ
ເກີດຂຶ້ນ, ແລະ ເມື່ອນັ້ນມັນຈະມີ ຫລື ມັນ
ສົມຄວນທີ່ຈະ [ກ]ຢຸດການຫລັ່ງເລືອດ; ແລ້ວ
[ຂ]ກົດຂອງໂມເຊຈະສົມບູນ ແທ້ຈິງແລ້ວ,
ມັນຈະສົມບູນທັງໝົດໃນທຸກຈຸດ ແລະ ທຸກ
ຂີດ, ແລະ ຈະບໍ່ມີສິ່ງໃດຕົກຫລົ່ນເລີຍ.
14 ແລະ ຈົ່ງເບິ່ງ, ນີ້ຄື [ກ]ຄວາມໝາຍທັງ
ໝົດຂອງ [ຂ]ກົດ, ທຸກຂັ້ນທຸກຕອນໄດ້ຊີ້ແຈງ
ເຖິງ [ຄ]ການເສຍສະລະຄັ້ງຍິ່ງໃຫຍ່ ແລະ
ຄັ້ງສຸດທ້າຍ; ແລະ ການເສຍສະລະຄັ້ງຍິ່ງ
ໃຫຍ່ ແລະ ຄັ້ງສຸດທ້າຍນີ້ ຈະເປັນພຣະບຸດ
ຂອງພຣະເຈົ້າ, ແທ້ຈິງແລ້ວ, ມັນຈະບໍ່ມີ
ຂອບເຂດ ແລະ ມັນຈະເປັນນິລັນດອນ.
15 ແລະ ພຣະອົງຈະນຳເອົາ [ກ]ຄວາມ
ລອດມາຫາຄົນທັງປວງທີ່ເຊື່ອໃນພຣະ
ນາມຂອງພຣະອົງ; ນີ້ຄືເຈດຕະນາຂອງ
ການເສຍສະລະຄັ້ງສຸດທ້າຍ, ເພື່ອຈະນຳອຸ
ທອນແຫ່ງຄວາມເມດຕາມາ, ຊຶ່ງມີອຳນາດ
ເໜືອກວ່າຄວາມຍຸດຕິທຳ, ແລະ ນຳຫົນ
ທາງມາໃຫ້ມະນຸດ ເພື່ອພວກເຂົາຈະໄດ້ມີ
ສັດທາຈົນເຖິງການກັບໃຈ.
16 ແລະ [ກ]ຄວາມເມດຕາສາມາດສະ
ໜອງຂໍ້ຮຽກຮ້ອງແຫ່ງ [ຂ]ຄວາມຍຸດຕິທຳ
ໄດ້, ແລະ ລ້ອມພວກເຂົາໄວ້ໃນອ້ອມ
ພຣະພາຫາແຫ່ງຄວາມປອດໄພ, ແຕ່ຜູ້ບໍ່ມີ
ສັດທາຈົນເຖິງການກັບໃຈ ຈະຕ້ອງຊົດໃຊ້
ດ້ວຍຕົນເອງຕາມກົດຂອງຂໍ້ຮຽກຮ້ອງແຫ່ງ
[ຄ]ຄວາມຍຸດຕິທຳທັງໝົດ; ສະນັ້ນ [ງ]ແຜນ
ແຫ່ງການໄຖ່ອັນຍິ່ງໃຫຍ່ ແລະ ນິລັນດອນ

9 *ຄ* ຄນພ ການຕົກຂອງ ອາດາມ ແລະ ເອວາ.
10 *ກ* ມຊ 5:6–7.
*ຂ* 2 ນຟ 9:7.
*ຄ* ຄນພ ເສຍສະລະ, ການເສຍສະລະ.
11 *ກ* ພບຍ 24:16; ມຊຢ 29:25.
12 *ກ* ຄນພ ຄາດຕະກຳ, ການຄາດຕະກຳ; ໂທດປະຫານຊີວິດ.
13 *ກ* 3 ນຟ 9:17, 19–20.
*ຂ* 3 ນຟ 15:5.
14 *ກ* ແອວ 30:3.
*ຂ* ຄນພ ກົດຂອງໂມເຊ.
*ຄ* ຄພ 138:35.
15 *ກ* ຄນພ ລອດ, ຄວາມລອດ.
16 *ກ* ຄນພ ເມດຕາ, ມີເມດ ຕາ, ຄວາມເມດຕາ.
*ຂ* ຄນພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຄ* ແອວ 12:32.
*ງ* ຄນພ ແຜນແຫ່ງການໄຖ່.

ມາເຖິງພຽງຄົນທີ່ມີສັດທາຈົນເຖິງການກັບ
ໃຈເທົ່ານັ້ນ.
17 ສະນັ້ນ ຂໍ ພຣະ ເຈົ້າ ຈົ່ງ ປະທານ ໃຫ້
ພວກ ທ່ານ ເຖີດ, ພີ່ນ້ອງຂອງຂ້າພະ ເຈົ້າ,
ເພື່ອພວກ ທ່ານຈະ ເລີ່ມ ໃຊ້ [ກ]ສັດທາຂອງ
ພວກທ່ານຈົນເຖິງການກັບໃຈ, ເພື່ອພວກ
ທ່ານ ຈະ ເລີ່ມ [ຂ]ເອີ້ນ ຫາພຣະ ນາມອັນສັກ
ສິດຂອງພຣະອົງ, ເພື່ອພຣະອົງຈະມີຄວາມ
ເມດຕາຕໍ່ພວກທ່ານ;
18 ແທ້ຈິງແລ້ວ, ຈົ່ງເອີ້ນຫາພຣະອົງເພື່ອ
ຄວາມເມດຕາ; ເພາະພຣະອົງມີອານຸພາບ
ທີ່ຈະຊ່ວຍໃຫ້ລອດ.
19 ແທ້ຈິງແລ້ວ, ຈົ່ງຖ່ອມຕົວ, ແລະ ອະທິ
ຖານຫາພຣະອົງຢູ່ສະເໝີ.
20 ຈົ່ງເອີ້ນຫາພຣະອົງ ເມື່ອພວກທ່ານຢູ່
ໃນທົ່ງຂອງພວກທ່ານ, ແທ້ຈິງແລ້ວ, ເພື່ອ
ຝູງສັດລ້ຽງທັງໝົດຂອງພວກທ່ານ.
21 ຈົ່ງ [ກ]ເອີ້ນຫາພຣະອົງໃນບ້ານເຮືອນ
ຂອງພວກທ່ານ, ແທ້ຈິງແລ້ວ, ເພື່ອຄົນທັງ
ໝົດໃນຄອບຄົວຂອງພວກທ່ານ, ທັງຕອນ
ເຊົ້າ, ຕອນບ່າຍ, ແລະ ຕອນແລງ.
22 ແທ້ ຈິງ ແລ້ວ, ຈົ່ງ ເອີ້ນ ຫາ ພຣະ ອົງ
ເພື່ອຕໍ່ຕ້ານອຳນາດຂອງສັດຕູຂອງພວກ
ທ່ານ.
23 ແທ້ ຈິງ ແລ້ວ, ຈົ່ງ [ກ]ເອີ້ນ ຫາ ພຣະ ອົງ
ເພື່ອ ຕໍ່ ຕ້ານ [ຂ]ມານ, ຊຶ່ງ ເປັນ ສັດ ຕູ ຂອງ
[ຄ]ຄວາມຊອບທຳທັງປວງ.
24 ຈົ່ງເອີ້ນຫາພຣະອົງເພື່ອພືດພັນໃນ
ທົ່ງຂອງພວກທ່ານ, ເພື່ອພວກທ່ານຈະມີ
ຢ່າງພຽງພໍ.
25 ຈົ່ງ ເອີ້ນ ຫາ ເພື່ອ ຝູງ ສັດ ລ້ຽງ ໃນ ທົ່ງ
ຂອງພວກທ່ານ, ເພື່ອມັນຈະເພີ່ມຫລາຍ
ຂຶ້ນ.
26 ແຕ່ນີ້ຍັງບໍ່ໝົດ; ພວກທ່ານຕ້ອງທຸ້ມ
ເທຈິດວິນຍານຂອງພວກທ່ານ ໃນ [ກ]ຫ້ອງ
ຂອງພວກທ່ານ, ແລະ ໃນບ່ອນລັບລີ້ຂອງ
ພວກທ່ານ, ແລະ ໃນຖິ່ນແຫ້ງແລ້ງກັນດານ
ຂອງພວກທ່ານ.
27 ແທ້ຈິງແລ້ວ, ເມື່ອພວກທ່ານບໍ່ເອີ້ນ
ຫາພຣະຜູ້ເປັນເຈົ້າ, ກໍຂໍໃຫ້ [ກ]ໃຈຂອງພວກ
ທ່ານ ຈົ່ງ [ຂ]ອີ່ມ ເອີບ, ແລະ ອອກ ມາເປັນ
ການອະທິຖານຫາພຣະອົງຢູ່ສະເໝີ ເພື່ອ
ຄວາມຜາສຸກຂອງພວກທ່ານ, ແລະ ເພື່ອ
ຄວາມຜາສຸກຂອງຄົນທີ່ຢູ່ອ້ອມຮອບພວກ
ທ່ານນຳອີກ.
28 ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງ
ຂອງຂ້າພະເຈົ້າ, ຂ້າພະເຈົ້າເວົ້າກັບພວກ
ທ່ານວ່າ, ຢ່າຄິດວ່າມັນໝົດເທົ່ານີ້; ເພາະ
ຫລັງຈາກພວກທ່ານເຮັດທັງໝົດນີ້ແລ້ວ,
ຖ້າຫາກພວກທ່ານຫັນໜ້າໜີຈາກ [ກ]ຄົນ
ຂັດສົນ, ແລະ ຄົນເປືອຍເປົ່າ, ແລະ ບໍ່ໄປ
ຢ້ຽມຢາມຄົນເຈັບປ່ວຍ ແລະ ຄົນເປັນທຸກ,
ແລະ [ຂ]ໃຫ້ເຂົ້າຂອງ ຂອງພວກທ່ານແກ່ຄົນ
ທີ່ຢູ່ໃນຄວາມຕ້ອງການແລ້ວ—ຂ້າພະເຈົ້າ
ເວົ້າກັບພວກທ່ານວ່າ, ຖ້າຫາກພວກທ່ານ
ບໍ່ເຮັດສິ່ງເຫລົ່ານີ້ແລ້ວ, ຈົ່ງເບິ່ງ, [ຄ]ການ
ອະທິຖານຂອງພວກທ່ານ [ງ]ບໍ່ມີປະໂຫຍດ,
ແລະ ບໍ່ຊ່ວຍອັນໃດໃຫ້ພວກທ່ານເລີຍ,
ແລະ ພວກທ່ານກໍຈະເປັນເໝືອນດັ່ງຄົນ
ໜ້າຊື່ໃຈຄົດ ຜູ້ທີ່ປະຕິເສດສັດທາ.
29 ສະນັ້ນ, ຖ້າຫາກພວກທ່ານບໍ່ຈົດຈຳ
ທີ່ຈະມີ [ກ]ຄວາມໃຈບຸນ, ພວກທ່ານກໍເປັນ

17 ກ ຄມພ ສັດທາ.
ຂ ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
21 ກ ພສສ 5:1–3; 3 ນຟ 18:21.
23 ກ 3 ນຟ 18:15, 18.
ຂ ຄມພ ມານ.
ຄ ຄມພ ຊອບທຳ, ຄວາມຊອບທຳ.
26 ກ ມທ 6:5–6.
27 ກ ຄມພ ໃຈ.
ຂ ຄມພ ໄຕ່ຕອງ.
28 ກ ຄມພ ຍາກຈົນ.
ຂ ຄມພ ໃຫ້ທານ, ການໃຫ້ທານ.
ຄ ມທ 15:7–8.
ງ ມຣນ 7:6–8.
29 ກ ຄມພ ໃຈບຸນ, ຄວາມໃຈບຸນ.

ດັ່ງເສດເຫລືອ, ທີ່ຊ່າງໄດ້ໂຍນຖິ້ມ, (ມັນບໍ່
ມີຄຸນຄ່າ) ແລະ ຖືກຢຽບຍ່ຳໄວ້ໃຕ້ຕີນຂອງ
ມະນຸດ.
30 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຫລັງ ຈາກ ທີ່ ພວກ ທ່ານ ມີ ພະຍານ ຢ່າງ
ຫລວງຫລາຍ ເຊັ່ນນີ້ແລ້ວ, ໂດຍທີ່ເຫັນວ່າ
ພຣະຄຳພີອັນສັກສິດໃຫ້ຖ້ອຍຄຳເຖິງເລື່ອງ
ນີ້, ຂ້າພະເຈົ້າຢາກໃຫ້ພວກທ່ານອອກມາ
ແລະ ນຳ [ກ]ຜົນໄປເຖິງການກັບໃຈ.
31 ແທ້ ຈິງ ແລ້ວ, ຂ້າ ພະ ເຈົ້າ ຢາກ ໃຫ້
ພວກທ່ານອອກມາ ແລະ ບໍ່ເຮັດໃຈແຂງກະ
ດ້າງອີກຕໍ່ໄປ; ເພາະຈົ່ງເບິ່ງ, ບັດນີ້ຄືເວລາ
ແລະ [ກ]ວັນ ແຫ່ງ ຄວາມ ລອດ ຂອງພວກ
ທ່ານ; ແລະ ສະນັ້ນ, ຖ້າຫາກພວກທ່ານຈະ
ກັບໃຈ ແລະ ບໍ່ເຮັດໃຈແຂງກະດ້າງແລ້ວ,
ແຜນແຫ່ງການໄຖ່ອັນຍິ່ງໃຫຍ່ນີ້ຈະຖືກນຳ
ມາຫາພວກທ່ານໂດຍທັນທີ.
32 ເພາະຈົ່ງເບິ່ງ, ຊີວິດນີ້ເປັນເວລາສຳ
ລັບມະນຸດທີ່ຈະ [ກ]ຕຽມພ້ອມເພື່ອພົບກັບ
ພຣະເຈົ້າ; ແທ້ຈິງແລ້ວ, ຈົ່ງເບິ່ງ ວັນແຫ່ງ
ຊີວິດນີ້ເປັນວັນສຳລັບມະນຸດທີ່ຈະສະແດງ
ຜົນງານຂອງຕົນເອງ.
33 ແລະ ບັດນີ້, ດັ່ງທີ່ຂ້າພະເຈົ້າໄດ້ເວົ້າ
ກັບພວກທ່ານມາກ່ອນແລ້ວ, ຄືວ່າພວກ
ທ່ານມີພະຍານຢ່າງຫລວງຫລາຍເຊັ່ນນີ້,
ສະນັ້ນ, ຂ້າພະເຈົ້າຂໍວິງວອນພວກທ່ານ
ວ່າຢ່າ [ກ]ຜັດ ວັນແຫ່ງ [ຂ]ການກັບໃຈຂອງ
ພວກທ່ານໄປ ຈົນ ເຖິງວັນສຸດທ້າຍເລີຍ;
ເພາະຫລັງຈາກມື້ແຫ່ງຊີວິດນີ້ ຊຶ່ງພວກເຮົາ
ໄດ້ຮັບມາເພື່ອຕຽມພ້ອມສຳລັບຊົ່ວນິລັນ
ດອນ, ຈົ່ງເບິ່ງ, ຖ້າຫາກພວກເຮົາບໍ່ປັບປຸງ
ເວລາຂອງພວກເຮົາຂະນະທີ່ຢູ່ໃນຊີວິດນີ້,
ເມື່ອນັ້ນ [ຄ]ຄືນແຫ່ງ [ງ]ຄວາມມືດຈະມາເຖິງ,
ໃນນັ້ນຈະມີການທຳງານບໍ່ໄດ້ເລີຍ.
34 ພວກທ່ານ ຈະ ເວົ້າບໍ່ ໄດ້ເມື່ອພວກ
ທ່ານຖືກນຳໄປຫາ [ກ]ວິກິດອັນເປັນຕາຢ້ານ,
ວ່າຂ້າພະເຈົ້າຈະກັບໃຈ, ວ່າຂ້າພະເຈົ້າ
ຈະກັບໄປຫາພຣະເຈົ້າຂອງຂ້າພະເຈົ້າ. ບໍ່
ເລີຍ, ພວກທ່ານຈະເວົ້າເຊັ່ນນີ້ບໍ່ໄດ້; ເພາະ
ວິນຍານດວງດຽວກັນນັ້ນ ທີ່ເປັນເຈົ້າຂອງ
ຮ່າງກາຍຂອງພວກທ່ານ ເມື່ອພວກທ່ານ
ອອກໄປຈາກຊີວິດນີ້ ວິນຍານດວງດຽວກັນ
ນັ້ນ ຈະມີອຳນາດທີ່ຈະເປັນເຈົ້າຂອງຮ່າງ
ກາຍຂອງພວກທ່ານ ໃນ ໂລກນິລັນດອນ
ນັ້ນ.
35 ເພາະຈົ່ງເບິ່ງ, ຖ້າຫາກພວກທ່ານຜັດ
ວັນ ແຫ່ງການກັບໃຈຈົນເຖິງວັນຕາຍ, ຈົ່ງ
ເບິ່ງ, ພວກທ່ານຕ້ອງ [ກ]ຂຶ້ນຢູ່ກັບ ວິນຍານ
ຂອງ ມານ, ແລະ ມັນ ໄດ້ [ຂ]ຜູກ ມັດພວກ
ທ່ານ ໄວ້ເປັນຂອງມັນ; ສະນັ້ນ, ພຣະວິນ
ຍານຂອງພຣະຜູ້ເປັນເຈົ້າຈຶ່ງອອກໄປຈາກ
ພວກທ່ານ ແລະ ບໍ່ປະທັບຢູ່ໃນພວກທ່ານ;
ແລະ ມານຈະມີອຳນາດເໜືອພວກທ່ານ;
ແລະ ນີ້ຄືພາວະສຸດທ້າຍຂອງຄົນຊົ່ວ.
36 ແລະ ສິ່ງນີ້ຂ້າພະເຈົ້າຮູ້, ເພາະພຣະ
ຜູ້ເປັນເຈົ້າໄດ້ກ່າວວ່າ ພຣະອົງຈະບໍ່ປະ
ທັບຢູ່ໃນວິຫານທີ່ [ກ]ບໍ່ບໍລິສຸດ, ແຕ່ຈະປະ
ທັບຢູ່ໃນໃຈຂອງ [ຂ]ຄົນຊອບທຳ; ແທ້ຈິງ
ແລ້ວ, ພຣະອົງໄດ້ກ່າວອີກວ່າ ຄົນຊອບທຳ
ຈະສາມາດຢູ່ໃນອານາຈັກຂອງພຣະອົງ,

30 *ກ* ມທ 3:8;
ແອວ 13:13.
31 *ກ* ຣມ 13:11–12.
32 *ກ* 2 ນຟ 2:21;
ແອວ 12:24; 42:4–6.
33 *ກ* ຮລມ 13:38;
ຄພ 45:2.
*ຂ* ຄມພ ກັບໃຈ, ການກັບໃຈ.
*ຄ* ຢຮ 9:4;
ຄພ 45:17.
*ງ* ຄມພ ຄວາມຕາຍທາງວິນ
ຍານ;
ຄວາມມືດທາງວິນຍານ.
34 *ກ* ແອວ 40:13–14.
35 *ກ* 2 ນຟ 28:19–23.
*ຂ* 2 ນຟ 9:9.
36 *ກ* ມຊຢ 2:37;
ແອວ 7:21;
ຮລມ 4:24.
*ຂ* ຄມພ ຊອບທຳ,
ຄວາມຊອບທຳ.

ຈະບໍ່ອອກໄປອີກ; ແຕ່ເສື້ອຜ້າຂອງພວກ
ເຂົາຕ້ອງຖືກ ເຮັດໃຫ້ ຂາວສະອາດ ໂດຍ
ທາງ ໂລ ຫິດ ຂອງ ພຣະ ເມສາ ນ້ອຍ ເສຍ
ກ່ອນ.
37 ແລະ ບັດ ນີ້, ພີ່ນ້ອງທີ່ຮັກ ແພງຂອງ
ຂ້າພະເຈົ້າ, ຂ້າພະເຈົ້າຂໍໃຫ້ພວກທ່ານຈົດ
ຈຳເລື່ອງເຫລົ່ານີ້ໄວ້, ແລະ ວ່າພວກທ່ານ
ຈະ [ກ]ທຳງານ ເພື່ອຄວາມ ລອດຂອງ ພວກ
ທ່ານຕໍ່ພຣະພັກຂອງພຣະເຈົ້າດ້ວຍຄວາມ
ຢ້ານກົວ, ແລະ ວ່າພວກທ່ານຈະບໍ່ປະຕິ
ເສດເລື່ອງການສະເດັດມາຂອງພຣະຄຣິດ
ອີກຕໍ່ໄປ;
38 ວ່າພວກທ່ານຈະບໍ່ [ກ]ຕໍ່ຕ້ານພຣະວິນ
ຍານບໍລິສຸດອີກຕໍ່ໄປ, ແຕ່ວ່າພວກທ່ານຈະ
ຮັບເອົາພຣະອົງ, ແລະ ຮັບເອົາ [ຂ]ພຣະນາມ
ຂອງພຣະຄຣິດ; ວ່າພວກທ່ານຈະຖ່ອມຕົວ
ລົງຢູ່ກັບພື້ນດິນ, ແລະ [ຄ]ນະມັດສະການ
ພຣະເຈົ້າດ້ວຍວິນຍານ ແລະ ດ້ວຍຄວາມ
ຈິງ, ບໍ່ວ່າພວກທ່ານຈະຢູ່ບ່ອນໃດກໍຕາມ;
ແລະ ວ່າພວກທ່ານຈະໃຊ້ຊີວິດຢູ່ໃນ [ງ]ການ
ຂອບພຣະໄທທຸກໆມື້ສຳລັບຄວາມເມດຕາ
ແລະ ພອນຕ່າງໆທີ່ພຣະອົງໄດ້ປະທານໃຫ້
ແກ່ພວກທ່ານ.
39 ແທ້ ຈິງ ແລ້ວ, ແລະ ຂ້າ ພະ ເຈົ້າ ຂໍ
ແນະນຳພວກທ່ານ, ພີ່ນ້ອງຂອງຂ້າພະເຈົ້າ
ອີກວ່າ, ພວກທ່ານຈົ່ງ [ກ]ເອົາໃຈໃສ່ຕໍ່ການ
ອະທິຖານຢູ່ສະເໝີ, ເພື່ອພວກທ່ານຈະບໍ່
ຖືກຊັກນຳໄປໂດຍ [ຂ]ການລໍ້ລວງຂອງມານ,
ເພື່ອມັນຈະບໍ່ມີອຳນາດເໜືອພວກທ່ານ,
ເພື່ອພວກທ່ານຈະບໍ່ໄດ້ຂຶ້ນຢູ່ກັບມັນໃນວັນ
ສຸດທ້າຍ; ເພາະຈົ່ງເບິ່ງ, ມັນ [ຄ]ບໍ່ໃຫ້ຂອງດີ
ເປັນລາງວັນແກ່ພວກທ່ານເລີຍ.
40 ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຂ້າພະເຈົ້າຂໍແນະນຳພວກທ່ານ
ໃຫ້ມີ [ກ]ຄວາມອົດທົນຕໍ່ຄວາມທຸກນາໆປະ
ການ; ວ່າບໍ່ໃຫ້ພວກທ່ານ [ຂ]ໝິ່ນປະໝາດຜູ້
ທີ່ຂັບໄລ່ພວກທ່ານອອກໄປຈາກທີ່ນະມັດ
ສະການ ເພາະຄວາມຍາກຈົນຂອງພວກ
ທ່ານ, ບໍ່ດັ່ງນັ້ນ ພວກທ່ານຈະກັບເປັນຄົນ
ບາບຄືກັນກັບພວກເຂົາ;
41 ແຕ່ຂໍໃຫ້ພວກທ່ານມີຄວາມອົດທົນ,
ແລະ ທົນຕໍ່ຄວາມທຸກເຫລົ່ານີ້, ດ້ວຍຄວາມ
ຫວັງອັນໝັ້ນຄົງວ່າ ມື້ໃດມື້ໜຶ່ງພວກທ່ານ
ຈະພົ້ນຈາກຄວາມທຸກທັງໝົດນີ້ຂອງພວກ
ທ່ານ.

## ບົດທີ 35

*ການສັ່ງສອນພຣະຄຳໄດ້ທຳລາຍເລ່ຫລ່ຽມຂອງຊາວໂຊຣຳ—ພວກເຂົາໄດ້ເນລະເທດຜູ້ທີ່ກັບໃຈ, ຜູ້ຊຶ່ງຈາກນັ້ນໄດ້ມາຮ່ວມກັບຜູ້ຄົນຂອງອຳໂມນທີ່ເຈີຊອນ—ແອວມາເສົ້າສະຫລົດໃຈຍ້ອນຄວາມຊົ່ວຮ້າຍຂອງປະຊາຊົນ. ປະມານ 74 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກແອມມິວເລັກກ່າວຂໍ້ຄວາມນີ້ຈົບແລ້ວ,
ພວກເຂົາກໍໄດ້ອອກໄປຈາກຝູງຊົນ ແລະ
ຂ້າມໄປຫາແຜ່ນດິນເຈີຊອນ.
2 ແທ້ ຈິງ ແລ້ວ, ຫລັງຈາກລາວໄດ້ສັ່ງ
ສອນພຣະຄຳແກ່ຊາວໂຊຣຳແລ້ວ, ພວກ
ອ້າຍ ນ້ອງ ທີ່ ໄປ ນຳ ກັນ ກໍ ໄດ້ ຂ້າມ ໄປ ຫາ
ແຜ່ນດິນເຈີຊອນຄືກັນ.

37 *ກ* ຟລປ 2:12.
38 *ກ* ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຂ* ມຊຢ 5:8; ແອວ 5:38.
*ຄ* ຄມພ ນະມັດສະການ.
*ງ* ພສສ 69:30; ຄພ 59:7. ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
39 *ກ* ຄມພ ຍາມ, ຄົນຍາມ.
*ຂ* ຄມພ ລໍ້ລວງ, ການລໍ້ລວງ.
*ຄ* ແອວ 30:60.
40 *ກ* ຄມພ ອົດທົນ, ຄວາມອົດທົນ.
*ຂ* ຄພ 31:9.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກຊາວໂຊຣຳສ່ວນຫລາຍຜູ້ທີ່ດີເດັ່ນໄດ້
ປຶກສາຫາລືກັນກ່ຽວກັບພຣະຄຳ ຊຶ່ງພວກ
ເຂົາໄດ້ຮັບການສັ່ງສອນມາ, ແລະ ພວກ
ເຂົາກໍມີຄວາມຄຽດແຄ້ນຍ້ອນວ່າພຣະ
ຄຳໄດ້ທຳລາຍ *ກ*ອາຊີບຂອງພວກເຂົາ;
ສະນັ້ນພວກເຂົາຈຶ່ງບໍ່ຍອມເຊື່ອຟັງພຣະ
ຄຳເລີຍ.
4 ແລະ ພວກເຂົາໄດ້ສົ່ງຄົນໄປເຕົ້າໂຮມ
ຜູ້ຄົນທັງໝົດທົ່ວແຜ່ນດິນມາ, ແລະ ໄດ້ປຶກ
ສາກັບຜູ້ຄົນເຫລົ່ານັ້ນກ່ຽວກັບພຣະຄຳທີ່
ໄດ້ເວົ້າໄວ້.
5 ບັດນີ້ຜູ້ປົກຄອງ ແລະ ພວກປະໂລຫິດ
ທັງຫລາຍ ແລະ ຜູ້ສອນທັງຫລາຍບໍ່ຍອມ
ໃຫ້ຜູ້ຄົນຮູ້ຈັກກ່ຽວກັບຄວາມປາດຖະໜາ
ຂອງຕົນ; ສະນັ້ນ ພວກເຂົາຈຶ່ງຮູ້ຈັກຄວາມ
ລັບໃນຈິດໃຈຂອງຜູ້ຄົນທັງໝົດ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ພວກເຂົາຮູ້ຈັກຈິດໃຈຂອງຜູ້ຄົນ
ທັງໝົດແລ້ວ, ຜູ້ທີ່ເຫັນດີກັບຄຳເວົ້າຂອງ
ແອວມາ ແລະ ອ້າຍນ້ອງຂອງເພິ່ນກໍຖືກ
ຂັບໄລ່ອອກຈາກແຜ່ນດິນ; ແລະ ມັນມີຜູ້
ຄົນເປັນຈຳນວນຫລວງຫລາຍທີ່ໄດ້ຂ້າມ
ໄປຫາແຜ່ນດິນເຈີຊອນ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື
ແອວມາ ແລະ ອ້າຍນ້ອງຂອງເພິ່ນໄດ້ປະ
ຕິບັດສາດສະໜາກິດແກ່ພວກເຂົາເຫລົ່າ
ນັ້ນ.
8 ບັດນີ້ຜູ້ຄົນທີ່ເປັນຊາວໂຊຣຳໄດ້ມີ
ຄວາມຄຽດແຄ້ນໃຫ້ຜູ້ຄົນຂອງອຳໂມນຜູ້ຢູ່
ໃນເຈີຊອນ, ແລະ ຜູ້ປົກຄອງທີ່ເປັນຫົວໜ້າ
ຂອງຊາວໂຊຣຳ, ຊຶ່ງເປັນຄົນຊົ່ວຫລາຍ
ທີ່ສຸດໄດ້ສົ່ງຄົນໄປຫາຜູ້ຄົນຂອງອຳໂມນ
ແລະ ແຈ້ງຄວາມປະສົງວ່າ ພວກເຂົາຕ້ອງ
ຂັບໄລ່ຄົນທັງໝົດ ຊຶ່ງໜີມາຈາກໂຊຣຳ
ອອກຈາກແຜ່ນດິນໄປ.
9 ແລະ ລາວໄດ້ຂູ່ເຂັນພວກເຂົາ. ແລະ
ບັດນີ້ຜູ້ຄົນຂອງອຳໂມນບໍ່ໄດ້ຢ້ານກົວຄຳ
ເວົ້າຂອງພວກເຂົາເລີຍ; ສະນັ້ນ ພວກເຂົາ
ຈຶ່ງບໍ່ຍອມຂັບໄລ່ພວກທີ່ໜີມານັ້ນໄປ, ແຕ່
ວ່າພວກເຂົາໄດ້ຕ້ອນຮັບຊາວໂຊຣຳຜູ້ທີ່
ທຸກຍາກທັງໝົດທີ່ຂ້າມມາຫາພວກເຂົາ;
ແລະ ພວກເຂົາໄດ້ *ກ*ບຳລຸງລ້ຽງ ແລະ ມອບ
ເຄື່ອງນຸ່ງຫົ່ມໃຫ້ພວກນັ້ນ, ແລະ ໄດ້ມອບທີ່
ດິນໃຫ້ແກ່ພວກນັ້ນ ເພື່ອເປັນມູນມໍລະດົກ;
ແລະ ພວກເຂົາໄດ້ຊ່ວຍເຫລືອຕາມຄວາມ
ຂັດສົນຂອງພວກນັ້ນ.
10 ບັດນີ້ສິ່ງເຫລົ່ານີ້ໄດ້ຍຸຍົງຊາວໂຊຣຳ
ໃຫ້ຄຽດແຄ້ນໃຫ້ຜູ້ຄົນຂອງອຳໂມນ, ແລະ
ພວກເຂົາໄດ້ເຂົ້າຮ່ວມກັບຊາວເລມັນ ແລະ
ຍຸຍົງພວກນັ້ນໃຫ້ຄຽດແຄ້ນນຳກັນ.
11 ແລະ ດ້ວຍເຫດນີ້ ຊາວໂຊຣຳ ແລະ
ຊາວເລມັນຈຶ່ງເລີ່ມກໍ່ສົງຄາມກັບຜູ້ຄົນຂອງ
ອຳໂມນ ແລະ ກັບຊາວນີໄຟນຳອີກ.
12 ແລະ ປີທີສິບເຈັດແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງແບບນີ້.
13 ແລະ ຜູ້ຄົນຂອງອຳໂມນໄດ້ໜີຈາກ
ແຜ່ນດິນເຈີຊອນ, ແລະ ໄປຫາແຜ່ນດິນ
ມີເລັກ ແລະ ໄດ້ມອບທີ່ດິນໃນແຜ່ນດິນ
ເຈີຊອນໃຫ້ກອງທັບຂອງຊາວນີໄຟ ເພື່ອ
ຈະໄດ້ຕໍ່ສູ້ກັບກອງທັບຂອງຊາວເລມັນ
ແລະ ກອງທັບຂອງຊາວໂຊຣຳ; ແລະ ສົງ
ຄາມລະຫວ່າງຊາວເລມັນກັບຊາວນີໄຟ
ກໍເລີ່ມມີຂຶ້ນດັ່ງນີ້, ໃນປີທີສິບແປດແຫ່ງ
ການປົກຄອງຂອງຜູ້ຕັດສິນ; ແລະ ຕໍ່ໄປນີ້

**35** 3 *ກ* ຄມພ ການຫລອກລວງ ຂອງປະໂລຫິດ.
9 *ກ* ມຊຢ 4:26. ຄມພ ຄວາມຜາສຸກ.

ຈະເປັນ [ກ]ເລື່ອງລາວກ່ຽວກັບສົງຄາມຂອງ
ພວກເຂົາ.
14 ແລະ ແອວມາ, ແລະ ອຳໂມນ, ແລະ
ພີ່ນ້ອງຂອງເຂົາເຈົ້າ, ແລະ ພ້ອມດ້ວຍລູກ
ຊາຍສອງຄົນຂອງແອວມາກໍໄດ້ກັບຄືນໄປ
ຫາແຜ່ນດິນເຊຣາເຮັມລາ, ຫລັງຈາກທີ່ໄດ້
ເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າໃນ
ການນຳພາຊາວໂຊຣຳ [ກ]ຫລາຍຄົນມາຫາ
ການກັບໃຈ; ແລະ ຫລາຍຕໍ່ຫລາຍຄົນທີ່
ຖືກນຳມາຫາການກັບໃຈກໍຖືກຂັບໄລ່ອອກ
ຈາກແຜ່ນດິນຂອງຕົນ; ແຕ່ວ່າພວກເຂົາໄດ້
ມີທີ່ດິນເປັນມູນມໍລະດົກຂອງຕົນຢູ່ໃນແຜ່ນ
ດິນເຈີຊອນ, ແລະ ພວກເຂົາກໍໄດ້ຈັບອາວຸດ
ເພື່ອປ້ອງກັນຕົນເອງ, ແລະ ເມຍຂອງຕົນ,
ແລະ ລູກຂອງຕົນ, ແລະ ແຜ່ນດິນຂອງຕົນ.
15 ບັດນີ້ແອວມາ, ໂດຍມີຄວາມໂສກ
ເສົ້າເພາະຄວາມຊົ່ວຮ້າຍຂອງຜູ້ຄົນຂອງ
ເພິ່ນ, ແທ້ຈິງແລ້ວ, ເພາະສົງຄາມ ແລະ
ການຂ້າຟັນ ແລະ ການຂັດແຍ້ງກັນ ຊຶ່ງມີ
ຢູ່ໃນບັນດາຜູ້ຄົນ; ແລະ ເພິ່ນໄດ້ປະກາດ
ພຣະຄຳ, ຫລື ສົ່ງປະກາດພຣະຄຳໄປໃນ
ບັນດາຜູ້ຄົນໃນທຸກຫົວເມືອງ, ໂດຍເຫັນວ່າ
ໃຈຂອງຜູ້ຄົນເລີ່ມດື້ດ້ານຂຶ້ນ; ແລະ ພວກ
ເຂົາ [ກ]ບໍ່ພໍໃຈຍ້ອນວ່າຄວາມເຄັ່ງຄັດຂອງ
ພຣະຄຳ, ດັ່ງນັ້ນມັນຈຶ່ງເຮັດໃຫ້ໃຈຂອງ
ເພິ່ນເສົ້າໂສກຢ່າງຍິ່ງ.
16 ສະນັ້ນ, ເພິ່ນຈຶ່ງໃຫ້ພວກລູກຊາຍ
ຂອງເພິ່ນມາຫາເພິ່ນ, ເພື່ອເພິ່ນຈະໄດ້
ມອບ [ກ]ໜ້າທີ່ຂອງເພິ່ນໃຫ້ເຂົາທຸກຄົນ
ເປັນສ່ວນຕົວ, ຊຶ່ງກ່ຽວກັບຄວາມຊອບທຳ.
ແລະ ພວກເຮົາມີເລື່ອງລາວກ່ຽວກັບຄຳສັ່ງ
ຂອງແອວມາ ຊຶ່ງໄດ້ໃຫ້ແກ່ພວກລູກຊາຍ
ຂອງເພິ່ນ ຕາມບັນທຶກຂອງເພິ່ນເອງ.

ຄຳສັ່ງຂອງແອວມາແກ່ຮີລາມັນລູກຊາຍ
ຂອງເພິ່ນ.

*ມີຢູ່ໃນບົດທີ 36 ແລະ 37.*

## ບົດທີ 36

*ແອວມາບອກຮີລາມັນໃຫ້ຮູ້ວ່າ ເພິ່ນໄດ້ປ່ຽນໃຈເຫລື້ອມໃສ ຫລັງຈາກໄດ້ເຫັນທູດ—ເພິ່ນໄດ້ທົນຕໍ່ຄວາມເຈັບປວດຂອງຈິດວິນຍານທີ່ອັບປະໂຫຍດ; ເພິ່ນໄດ້ເອີ້ນຫາພຣະນາມຂອງພຣະເຢຊູ ແລະ ໄດ້ເກີດໃໝ່ຈາກພຣະເຈົ້າ—ຈິດວິນຍານຂອງເພິ່ນເຕັມໄປດ້ວຍຄວາມສຸກອັນຫວານຊື່ນ—ເພິ່ນໄດ້ເຫັນເຫລົ່າທູດສັນລະເສີນພຣະເຈົ້າ—ຜູ້ປ່ຽນໃຈເຫລື້ອມໃສຢ່າງຫລວງຫລາຍໄດ້ຊີມລົດຊາດ ແລະ ໄດ້ເຫັນຄືກັນກັບເພິ່ນໄດ້ຊີມ ແລະ ໄດ້ເຫັນ. ປະມານ 74 ປີ ກ່ອນ ຄ.ສ.*

1 [ກ]ລູກ ຂອງ ພໍ່ ຈົ່ງ ຟັງ ຄຳ ເວົ້າ ຂອງ ພໍ່;
ເພາະວ່າພໍ່ຈະສາບານກັບລູກວ່າ, ຕາບໃດ
ທີ່ລູກຈະຮັກສາພຣະບັນຍັດຂອງພຣະເຈົ້າ
ລູກຈະຮຸ່ງເຮືອງຢູ່ໃນແຜ່ນດິນ.
2 ພໍ່ຢາກໃຫ້ລູກເຮັດດັ່ງທີ່ພໍ່ໄດ້ເຮັດມາ
ແລ້ວ, ໃນການລະນຶກເຖິງການເປັນຊະ
ເລີຍຂອງບັນພະບຸລຸດຂອງພວກເຮົາ;
ເພາະພວກເຂົາເຫລົ່ານັ້ນຢູ່ໃນຄວາມເປັນ
[ກ]ທາດ, ແລະ ບໍ່ມີຜູ້ໃດຈະປົດປ່ອຍພວກ
ເຂົາໄດ້ ນອກຈາກ [ຂ]ພຣະເຈົ້າຂອງອັບຣາ
ຮາມ, ແລະ ພຣະເຈົ້າຂອງອີຊາກ, ແລະ
ພຣະເຈົ້າຂອງຢາໂຄບ, ແລະ ພຣະອົງໄດ້
ປົດປ່ອຍພວກເຂົາເຫລົ່ານັ້ນອອກຈາກ
ຄວາມທຸກຂອງພວກເຂົາຢ່າງແນ່ນອນ.

13 *ກ* ແອວ 43:3.
14 *ກ* ແອວ 35:6.
15 *ກ* ຄນພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
16 *ກ* ຄນພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
**36** 1 *ກ* ຣລມ 5:9–14.
2 *ກ* ມຊຢ 23:23; 24:17–21.
*ຂ* ອພຍ 3:6; ແອວ 29:11.

3 ແລະ ບັດນີ້, ໂອ້ ຮີລາມັນລູກຂອງພໍ່,
ຈົ່ງເບິ່ງ, ລູກຍັງໜຸ່ມແໜ້ນຢູ່, ແລະ ສະນັ້ນ,
ພໍ່ ຈຶ່ງ ວິງວອນ ລູກ ໃຫ້ ຟັງ ຄຳ ເວົ້າ ຂອງ ພໍ່
ແລະ ຮຽນຮູ້ ຈາກພໍ່; ເພາະພໍ່ຮູ້ວ່າຜູ້ໃດກໍ
ຕາມທີ່ໄວ້ວາງໃຈໃນພຣະເຈົ້າ, ຜູ້ນັ້ນຈະ
ໄດ້ຮັບການອູ້ມຊູໃນ ກເວລາຂັດສົນຂອງ
ພວກ ເຂົາ, ແລະ ຄວາມ ຫຍຸ້ງ ຍາກ ຂອງ
ພວກເຂົາ, ແລະ ຄວາມທຸກຂອງພວກເຂົາ,
ແລະ ພວກເຂົາຈະຖືກ ຂຍົກຂຶ້ນໃນວັນສຸດ
ທ້າຍ.

4 ແລະ ພໍ່ ບໍ່ ຢາກ ໃຫ້ ລູກ ຄິດ ວ່າ ພໍ່ ກຮູ້
ຈັກ ຈາກຕົນ ເອງ—ບໍ່ ແມ່ນ ຈາກ ທາງ ໂລກ
ແຕ່ຈາກທາງວິນຍານ, ບໍ່ແມ່ນຈາກຈິດໃຈ
ອັນເປັນ ຂການມະລົນ ແຕ່ຈາກພຣະເຈົ້າ.

5 ບັດນີ້, ຈົ່ງເບິ່ງ, ພໍ່ເວົ້າກັບລູກວ່າ, ຖ້າ
ຫາກພໍ່ບໍ່ໄດ້ ກເກີດຈາກພຣະເຈົ້າແລ້ວ ພໍ່
ຈະ ຂບໍ່ຮູ້ ຈັກ ເລື່ອງ ເຫລົ່ານີ້ ເລີຍ; ແຕ່ວ່າ
ໂດຍປາກຂອງທູດຜູ້ບໍລິສຸດຂອງພຣະອົງ,
ພຣະເຈົ້າຈຶ່ງເຮັດໃຫ້ເລື່ອງເຫລົ່ານີ້ເປັນທີ່ຮູ້
ຈັກແກ່ພໍ່, ບໍ່ແມ່ນວ່າຈາກ ຄການມີຄ່າຄວນ
ອັນໃດຂອງພໍ່;

6 ເພາະວ່າພໍ່ ໄດ້ ທ່ອງ ທ່ຽວ ໄປ ມາ ກັບ
ພວກລູກຊາຍຂອງໂມໄຊຢາ, ພະຍາຍາມ
ທີ່ຈະ ກທຳລາຍສາດສະໜາຈັກຂອງພຣະ
ເຈົ້າ; ແຕ່ຈົ່ງເບິ່ງ, ພຣະເຈົ້າໄດ້ສົ່ງທູດຜູ້ບໍ
ລິສຸດຂອງພຣະອົງລົງມາຢັບຢັ້ງພວກພໍ່ໄວ້
ຕາມທາງ.

7 ແລະ ຈົ່ງເບິ່ງ, ທູດໄດ້ເວົ້າກັບພວກພໍ່,
ຄືກັບ ວ່າ ສຽງຟ້າຮ້ອງ ແລະ ທັງແຜ່ນດິນ
ໂລກໄດ້ ກສັ່ນສະເທືອນໃຕ້ຕີນຂອງພວກ
ພໍ່; ແລະ ພວກພໍ່ໄດ້ລົ້ມລົງຢູ່ກັບພື້ນດິນ,
ເພາະ ວ່າ ຂຄວາມ ຢ້ານ ກົວ ທີ່ ພວກ ພໍ່ ມີຕໍ່
ພຣະຜູ້ເປັນເຈົ້າ.

8 ແຕ່ ຈົ່ງເບິ່ງ, ສຽງຂອງທູດໄດ້ເວົ້າກັບ
ພໍ່ວ່າ: ຈົ່ງລຸກຂຶ້ນເຖີດ. ແລະ ພໍ່ໄດ້ລຸກຂຶ້ນ
ແລະ ເຫັນທູດອົງນັ້ນ.

9 ແລະ ເພິ່ນໄດ້ເວົ້າກັບພໍ່ວ່າ: ຖ້າບໍ່ຢາກ
ໃຫ້ຕົວຂອງເຈົ້າຖືກທຳລາຍ, ກໍຢ່າພະຍາ
ຍາມທຳລາຍສາດສະໜາຈັກຂອງພຣະ
ເຈົ້າອີກເລີຍ.

10 ແລະ ເຫດການ ໄດ້ບັງເກີດຂຶ້ນຄື ພໍ່
ໄດ້ລົ້ມລົງຢູ່ກັບພື້ນດິນ; ແລະ ເປັນເວລາ
ກສາມມື້ກັບສາມຄືນທີ່ພໍ່ເປີດປາກບໍ່ໄດ້,
ທັງແຂນ ແລະ ຂາຂອງພໍ່ກໍເໜັງຕີງບໍ່ໄດ້.

11 ແລະ ທູດໄດ້ ເວົ້າກັບ ພໍ່ ອີກຫລາຍ
ເລື່ອງ ຊຶ່ງອ້າຍນ້ອງຂອງພໍ່ໄດ້ຍິນແຕ່ວ່າ ພໍ່
ບໍ່ໄດ້ຍິນເລີຍ; ພໍ່ພຽງແຕ່ໄດ້ຍິນຄຳວ່າ—ຖ້
າບໍ່ຢາກໃຫ້ຕົວຂອງເຈົ້າຖືກທຳລາຍ, ກໍຢ່າ
ພະຍາຍາມທຳລາຍສາດສະໜາຈັກຂອງ
ພຣະເຈົ້າອີກເລີຍ—ພໍ່ກໍເກີດມີຄວາມຢ້ານ
ກົວ ແລະ ແປກປະຫລາດໃຈທີ່ສຸດ ຢ້ານວ່າ
ຕົວເອງຈະຖືກທຳລາຍ, ພໍ່ກໍລົ້ມລົງຢູ່ກັບ
ພື້ນດິນ ແລະ ພໍ່ກໍບໍ່ໄດ້ຍິນຫຍັງອີກເລີຍ.

12 ແຕ່ວ່າພໍ່ຖືກທໍລະມານດ້ວຍຄວາມ
ທໍລະມານ ກນິລັນດອນ, ເພາະວ່າຈິດວິນ
ຍານຂອງພໍ່ເຈັບປວດຈົນສຸດຂີດ ແລະ ຖືກ
ທໍລະມານດ້ວຍບາບທັງໝົດຂອງພໍ່.

13 ແທ້ຈິງແລ້ວ, ພໍ່ໄດ້ລະນຶກເຖິງບາບ
ແລະ ຄວາມຊົ່ວຮ້າຍທັງໝົດຂອງພໍ່, ຊຶ່ງພໍ່
ຖືກ ກທໍລະມານດ້ວຍຄວາມເຈັບປວດແຫ່ງ

3 ກ ຣມ 8:28.
ຂ ມຊຢ 23:21–22.
4 ກ 1 ກຣທ 2:11;
ແອວ 5:45–46.
ຄມພ ຄວາມຮູ້.
ຂ ຄມພ ການມະລົນ.
5 ກ ຄມພ ເກີດໃໝ່, ເກີດ
ຈາກພຣະເຈົ້າ.
ຂ ແອວ 26:21–22.
ຄ ຄມພ ຄ່າຄວນ, ການ
ມີຄ່າຄວນ.
6 ກ ມຊຢ 27:10.
7 ກ ມຊຢ 27:18.
ຂ ຄມພ ຢ້ານກົວ, ຄວາມ
ຢ້ານກົວ—ຄວາມ
ຢ້ານກົວພຣະເຈົ້າ.
10 ກ ມຊຢ 27:19–23.
12 ກ ຄພ 19:11–15.
13 ກ ຄມພ ຮູ້ສຶກຜິດ,
ຄວາມຮູ້ສຶກຜິດ.

ນະລົກ; ແທ້ຈິງແລ້ວ, ພໍ່ເຫັນວ່າພໍ່ໄດ້ກະບົດຕໍ່ພຣະເຈົ້າຂອງພໍ່, ແລະວ່າພໍ່ບໍ່ໄດ້ຮັກສາພຣະບັນຍັດອັນສັກສິດຂອງພຣະອົງ.

14 ແທ້ຈິງແລ້ວ, ພໍ່ໄດ້ຂ້າລູກຫລານຂອງພຣະອົງມາຢ່າງຫລວງຫລາຍແລ້ວ, ຫລືຊັກນຳພວກເຂົາໄປຫາຄວາມທຸກທໍລະມານ; ແທ້ຈິງແລ້ວ, ແລະ ໂດຍສະຫລຸບຄວາມຊົ່ວຮ້າຍຂອງພໍ່ໃຫຍ່ຫລວງທີ່ສຸດ, ພຽງແຕ່ຄິດທີ່ຈະເຂົ້າໄປໃນທີ່ປະທັບຂອງພຣະເຈົ້າຂອງພໍ່, ມັນກໍໄດ້ເຮັດໃຫ້ຈິດວິນຍານຂອງພໍ່ຕ້ອງທໍລະມານດ້ວຍຄວາມຢ້ານກົວຢ່າງບໍ່ອາດສາມາດຈະວັດແທກໄດ້.

15 ໂອ້, ພໍ່ຄິດ, ວ່າພໍ່ [ກ]ຢາກໃຫ້ຖືກກຳຈັດອອກໄປທັງຈິດວິນຍານ ແລະ ຮ່າງກາຍໃຫ້ສູນຫາຍໄປ, ເພື່ອພໍ່ຈະບໍ່ຖືກນຳມາຢືນຢູ່ໃນທີ່ປະທັບຂອງພຣະເຈົ້າຂອງພໍ່, ເພື່ອຮັບການພິພາກສາກ່ຽວກັບ [ຂ]ການປະພຶດຂອງພໍ່.

16 ແລະ ບັດນີ້, ພໍ່ຕ້ອງທົນທຸກທໍລະມານຢູ່ເປັນເວລາສາມມື້ສາມຄືນ, ດ້ວຍຄວາມເຈັບປວດຂອງຈິດວິນຍານທີ່ [ກ]ອັບປະໂຫຍດ.

17 ແລະ ເຫດການໄດ້ບັງເກີດຂຶ້ນຄືເວລາທີ່ພໍ່ຕ້ອງທົນກັບການທໍລະມານຢູ່ນັ້ນ, ຂະນະທີ່ພໍ່ [ກ]ເຈັບປວດຢູ່ດ້ວຍຄວາມຊົງຈຳເຖິງບາບອັນຫລວງຫລາຍຂອງພໍ່ຢູ່ນັ້ນ, ຈົ່ງເບິ່ງ, ພໍ່ໄດ້ລະນຶກເຖິງຄຳທຳນາຍຂອງພໍ່ທີ່ເພິ່ນໄດ້ເວົ້າຕໍ່ຜູ້ຄົນກ່ຽວກັບການສະເດັດມາຂອງພຣະເຢຊູຄຣິດພຣະບຸດຂອງພຣະເຈົ້າອົງໜຶ່ງ, ເພື່ອຊົດໃຊ້ແທນບາບຂອງໂລກ.

18 ບັດນີ້, ເວລາພໍ່ກຳລັງລະນຶກເຖິງຄວາມຄິດເຫລົ່ານີ້, ພໍ່ໄດ້ຮ້ອງໄຫ້ຢູ່ໃນໃຈວ່າ: ໂອ້ ພຣະເຢຊູເຈົ້າເອີຍ, ພຣະບຸດຂອງພຣະເຈົ້າ, ຂໍຊົງມີເມດຕາປານີຕໍ່ຂ້ານ້ອຍຜູ້ [ກ]ຢູ່ໃນນ້ຳບີແຫ່ງຄວາມຂົມຂື່ນ, ແລະ ຖືກປິດລ້ອມດ້ວຍ [ຂ]ສາຍໂສ້ແຫ່ງຄວາມຕາຍອັນເປັນນິດດ້ວຍເຖີດ.

19 ແລະ ບັດນີ້, ຈົ່ງເບິ່ງເວລາທີ່ພໍ່ຄິດແບບນີ້, ພໍ່ບໍ່ຈື່ຈຳຄວາມເຈັບປວດຂອງພໍ່ອີກເລີຍ; ແທ້ຈິງແລ້ວ, ພໍ່ບໍ່ໄດ້ [ກ]ທໍລະມານດ້ວຍຄວາມລະນຶກເຖິງບາບຂອງພໍ່ອີກຕໍ່ໄປ.

20 ແລະ ໂອ້, ພໍ່ບໍ່ເຄີຍເຫັນ [ກ]ຄວາມສຸກແລະ ຄວາມສະຫວ່າງອັນໃດທີ່ໜ້າອັດສະຈັນເຊັ່ນນີ້; ແທ້ຈິງແລ້ວ, ຈິດວິນຍານຂອງພໍ່ເຕັມໄປດ້ວຍຄວາມສຸກທີ່ສຸດເທົ່າກັບຄວາມເຈັບປວດຂອງພໍ່!

21 ແທ້ຈິງແລ້ວ, ພໍ່ເວົ້າກັບເຈົ້າຜູ້ເປັນລູກຂອງພໍ່ວ່າ, ບໍ່ມີອັນໃດຈະໃຫຍ່ຫລວງ ແລະຂົມຂື່ນໄດ້ເທົ່າກັບຄວາມເຈັບປວດຂອງພໍ່. ແທ້ຈິງແລ້ວ, ແລະ ພໍ່ກ່າວກັບເຈົ້າລູກຂອງພໍ່ອີກວ່າ, ບໍ່ມີອັນໃດເລີຍທີ່ງົດງາມ ແລະຫວານຊື່ນເທົ່າກັບຄວາມສຸກຂອງພໍ່.

22 ແທ້ຈິງແລ້ວ, ພໍ່ຄິດວ່າພໍ່ໄດ້ເຫັນຄືກັນກັບ [ກ]ລີໄຮບັນພະບຸລຸດຂອງພວກເຮົາ, ຊຶ່ງໄດ້ເຫັນພຣະເຈົ້າປະທັບຢູ່ເທິງພຣະທີ່ນັ່ງຂອງພຣະອົງ, ຫຸ້ມລ້ອມໄປດ້ວຍເຫລົ່າທູດທັງຫລາຍຈົນນັບບໍ່ຖ້ວນ, ຢູ່ໃນທ່າທາງຮ້ອງເພງ ແລະ ສັນລະເສີນພຣະເຈົ້າຂອງພວກເຂົາ; ແທ້ຈິງແລ້ວ, ແລະ ຈິດວິນຍານຂອງພໍ່ຢາກຈະຢູ່ບ່ອນນັ້ນ.

15 *ກ* ພນມ 6:15–17; ແອວ 12:14.
*ຂ* ແອວ 41:3; ຄພ 1:9–10.
16 *ກ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
17 *ກ* 2 ກຣທ 7:10.
18 *ກ* ອສ ຢູ່ໃນຄວາມສຳນຶກຜິດຫລາຍທີ່ສຸດ.
*ຂ* 2 ນຟ 9:45; 28:22; ແອວ 12:11; ມຊ 7:26.
19 *ກ* ຄມພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
20 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
22 *ກ* 1 ນຟ 1:8.

23 ແຕ່ ຈົ່ງ ເບິ່ງ, ແຂນ ຂາ ຂອງ ພໍ່ ໄດ້ ຮັບ
[ກ]ກຳລັງຂອງມັນຄືນມາອີກ, ແລະ ພໍ່ໄດ້ຢືນ
ຂຶ້ນດ້ວຍຕີນຂອງພໍ່ເອງ, ແລະ ໄດ້ສະແດງ
ແກ່ຜູ້ ຄົນ ໃຫ້ປະຈັກວ່າ ພໍ່ໄດ້ [ຂ]ເກີດໃໝ່
ແລ້ວຈາກພຣະເຈົ້າ.
24 ແທ້ ຈິງ ແລ້ວ, ນັບ ແຕ່ ເວລາ ນັ້ນ ເປັນ
ຕົ້ນມາຈົນເຖິງເວລານີ້, ພໍ່ໄດ້ເຮັດວຽກຢ່າງ
ບໍ່ທໍ້ຖອຍ, ເພື່ອພໍ່ຈະໄດ້ຊັກນຳເອົາຈິດວິນ
ຍານຫລາຍດວງມາຫາການກັບໃຈ; ເພື່ອ
ພໍ່ຈະໄດ້ນຳເອົາພວກເຂົາມາ [ກ]ຊີມລົດຊາດ
ຂອງຄວາມສຸກ ຊຶ່ງພໍ່ໄດ້ຊີມມັນມາແລ້ວ;
ເພື່ອພວກເຂົາຈະໄດ້ເກີດຈາກພຣະເຈົ້າ
ອີກ, ແລະ [ຂ]ເຕັມໄປດ້ວຍພຣະວິນຍານບໍລິ
ສຸດ.
25 ແທ້ຈິງແລ້ວ, ແລະ ບັດນີ້ຈົ່ງເບິ່ງ, ໂອ້
ລູກ ຂອງພໍ່, ພຣະຜູ້ ເປັນ ເຈົ້າ ໄດ້ປະທານ
ຄວາມຊື່ນຊົມຢ່າງຍິ່ງໃຫ້ພໍ່ໃນຜົນງານຂອງ
ພໍ່;
26 ເພາະຍ້ອນວ່າ [ກ]ພຣະຄຳຊຶ່ງພຣະອົງ
ໃຫ້ ແກ່ພໍ່, ຈົ່ງເບິ່ງ, ຄົນຢ່າງຫລວງຫລາຍ
ຈຶ່ງ ເກີດຈາກພຣະເຈົ້າ, ແລະ ໄດ້ຊີມ ລົດ
ຊາດຄືກັນກັບພໍ່ໄດ້ຊີມມາ, ແລະ ເຫັນຄືກັນ
ກັບທີ່ພໍ່ໄດ້ເຫັນມາ; ສະນັ້ນ ພວກເຂົາຈຶ່ງຮູ້
ຈັກເຖິງເລື່ອງເຫລົ່ານີ້, ຊຶ່ງພໍ່ໄດ້ເວົ້າໄວ້ຄື
ກັນກັບທີ່ພໍ່ໄດ້ຮູ້ຈັກ; ແລະ ຄວາມຮູ້ທີ່ພໍ່ມີ
ນັ້ນເປັນຂອງພຣະເຈົ້າ.
27 ແລະ ພໍ່ໄດ້ຮັບການອູ້ມຊູເວລາມີ
ຄວາມເດືອດຮ້ອນ ແລະ ເວລາມີຄວາມ
ຫຍຸ້ງຍາກທຸກຢ່າງ, ແທ້ຈິງແລ້ວ, ແລະ
ໃນຄວາມທຸກນາໆປະການ; ແທ້ຈິງແລ້ວ,
ພຣະເຈົ້າໄດ້ປົດປ່ອຍພໍ່ອອກຈາກຄຸກ
ແລະ ອອກຈາກພັນທະການ, ແລະ ອອກ
ຈາກຄວາມຕາຍ; ແທ້ຈິງແລ້ວ, ພໍ່ໄວ້ວາງ
ໃຈໃນພຣະອົງ, ແລະ ພຣະອົງໄດ້ [ກ]ປົດ
ປ່ອຍພໍ່ອອກໄປ.
28 ແລະ ພໍ່ຮູ້ວ່າ ພຣະອົງຈະ [ກ]ຍົກພໍ່ຂຶ້ນ
ໃນວັນສຸດທ້າຍ, ເພື່ອພໍ່ຈະໄດ້ຢູ່ກັບພຣະ
ອົງໃນ [ຂ]ລັດສະໝີພາບ; ແທ້ຈິງແລ້ວ, ພໍ່ຈະ
ສັນລະເສີນພຣະອົງຕະຫລອດໄປ, ເພາະ
ພຣະອົງໄດ້ [ຄ]ນຳພາບັນພະບຸລຸດຂອງພວກ
ເຮົາອອກຈາກເອຢິບ ແລະ ພຣະອົງໄດ້
ກືນ [ງ]ຊາວເອຢິບເຂົ້າໃນທະເລແດງ; ແລະ
ໂດຍອຳນາດຂອງພຣະອົງ, ພຣະອົງໄດ້ນຳ
ເອົາຄົນເຫລົ່ານັ້ນໄປຫາແຜ່ນດິນແຫ່ງຄຳ
ສັນຍາ; ແທ້ຈິງແລ້ວ, ແລະ ພຣະອົງໄດ້ປົດ
ປ່ອຍພວກເຂົາໃຫ້ອອກຈາກຄວາມເປັນ
ທາດ ແລະ ການເປັນຊະເລີຍເປັນບາງຄັ້ງ.
29 ແທ້ຈິງແລ້ວ, ແລະ ພຣະອົງໄດ້ນຳພາ
ບັນພະບຸລຸດຂອງພວກເຮົາອອກຈາກແຜ່ນ
ດິນເຢຣູຊາເລັມມາ; ແລະ ໂດຍອຳນາດອັນ
ເປັນນິດຂອງພຣະອົງ, ໄດ້ປົດປ່ອຍພວກ
ເຂົາອອກຈາກ [ກ]ຄວາມເປັນທາດ ແລະ
ຄວາມເປັນຊະເລີຍເປັນບາງຄັ້ງ, ຈົນລົງມາ
ເຖິງປະຈຸບັນນີ້; ແລະ ພໍ່ໄດ້ເກັບກຳເລື່ອງ
ຄວາມເປັນຊະເລີຍຂອງພວກເຂົາໄວ້ໃນ
ຄວາມຊົງຈຳສະເໝີ; ແທ້ຈິງແລ້ວ, ແລະ
ລູກກໍຄວນເກັບກຳຄວາມເປັນຊະເລີຍຂອງ
ພວກເຂົາໄວ້ໃນຄວາມຊົງຈຳເໝືອນດັ່ງພໍ່
ໄດ້ເຮັດມາ.
30 ແຕ່ຈົ່ງເບິ່ງ, ລູກຂອງພໍ່, ນີ້ຍັງບໍ່ໝົດ;
ເພາະວ່າລູກຄວນຮູ້ຈັກເໝືອນດັ່ງພໍ່ໄດ້ຮູ້
ວ່າ, [ກ]ຕາບໃດທີ່ລູກຍັງຮັກສາພຣະບັນຍັດ

23 *ກ* ມຊ 1:10.
*ຂ* ແອວ 5:14.
ຄມພ ເກີດໃໝ່, ເກີດ ຈາກພຣະເຈົ້າ.
24 *ກ* 1 ນຟ 8:12; ມຊຢ 4:11.
*ຂ* 2 ນຟ 32:5; 3 ນຟ 9:20.
ຄມພ ພຣະວິນຍານບໍລິສຸດ.
26 *ກ* ແອວ 31:5.
27 *ກ* ພສສ 34:17.
28 *ກ* 3 ນຟ 15:1.
*ຂ* ຄມພ ລັດສະໝີພາບ.
*ຄ* ອພຍ 12:51.
*ງ* ອພຍ 14:26–27.
29 *ກ* ມຊຢ 24:17; 27:16; ແອວ 5:5–6.
30 *ກ* 2 ນຟ 1:9–11; ແອວ 50:19–22.

ຂອງພຣະເຈົ້າ ລູກຈະຮຸ່ງເຮືອງຢູ່ໃນແຜ່ນ
ດິນ; ແລະ ລູກຄວນຈະຮູ້ຈັກອີກວ່າ ຕາບ
ໃດທີ່ລູກບໍ່ຮັກສາພຣະບັນຍັດຂອງພຣະ
ເຈົ້າ ລູກຈະຖືກຕັດ ອອກ ຈາກ ທີ່ ປະທັບ
ຂອງພຣະອົງ. ບັດນີ້, ນີ້ເປັນໄປຕາມພຣະ
ຄຳຂອງພຣະອົງ.

## ບົດທີ 37

*ແຜ່ນ ຈາລຶກ ທອງເຫລືອງ ແລະ ພຣະຄຳ ພີອື່ນໆ ໄດ້ ຖືກປົກປັກຮັກສາ ໄວ້ເພື່ອນຳ ເອົາ ຈິດວິນຍານ ທັງຫລາຍ ມາຫາ ຄວາມ ລອດ—ຊາວ ຢາເຣັດ ຖືກທຳ ລາຍຍ້ອນ ຄວາມ ຊົ່ວ ຮ້າຍ ຂອງພວກ ເຂົາ—ຄຳ ສາບານລັບ ແລະ ຄຳສັນຍາຂອງພວກເຂົາ ຈະຕ້ອງຖືກຮັກສາ ໄວ້ບໍ່ໃຫ້ໃຜຮູ້—ຈົ່ງປຶກ ສາກັບພຣະຜູ້ເປັນເຈົ້າໃນທຸກສິ່ງທຸກຢ່າງ ທີ່ທ່ານເຮັດ—ດັ່ງທີ່ເລຍ ໂຮນາໄດ້ນຳພາ ຊາວນີໄຟໄປແນວໃດ, ພຣະຄຳຂອງພຣະ ຄຣິດກໍຈະນຳພາຜູ້ຄົນ ໄປຫາຊີວິດນິລັນ ດອນແນວນັ້ນ. ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ຮີລາມັນລູກຂອງພໍ່, ພໍ່ສັ່ງ
ລູກອີກວ່າ ລູກຈົ່ງຮັບເອົາ [ກ]ບັນທຶກ ຊຶ່ງໄດ້
ຖືກ [ຂ]ມອບໃຫ້ພໍ່;
2 ແລະ ພໍ່ສັ່ງລູກອີກວ່າ ໃຫ້ລູກບັນທຶກ
ກ່ຽວກັບຜູ້ຄົນພວກນີ້ໄວ້ໃນແຜ່ນຈາລຶກ
ຂອງນີໄຟຄືກັນກັບທີ່ພໍ່ໄດ້ກະທຳມາ, ແລະ
ຮັກສາສິ່ງເຫລົ່ານີ້ທັງໝົດທີ່ພໍ່ໄດ້ຮັກສາມາ
ໃຫ້ສັກສິດຄືກັນກັບທີ່ພໍ່ໄດ້ຮັກສາມັນໄວ້;
ເພາະວ່າມັນເປັນໄປເພື່ອຈຸດປະສົງອັນ
[ກ]ສະຫລາດທີ່ຕ້ອງຮັກສາມັນໄວ້.
3 ແລະ [ກ]ແຜ່ນຈາລຶກທອງເຫລືອງເຫລົ່າ
ນີ້ ຊຶ່ງມີຕົວອັກສອນສະຫລັກໄວ້ໃນນັ້ນ, ຊຶ່ງ
ມີບັນທຶກ ແລະ ພຣະຄຳພີອັນສັກສິດຢູ່ໃນ
ນັ້ນ, ຊຶ່ງມີລຳດັບການສືບເຊື້ອສາຍຂອງ
ບັນພະບຸລຸດຂອງພວກເຮົາຕັ້ງແຕ່ຕົ້ນ—
4 ຈົ່ງເບິ່ງ, ບັນພະບຸລຸດຂອງພວກເຮົາ
ໄດ້ທຳນາຍໄວ້, ວ່າມັນຄວນຖືກຮັກສາໄວ້
ແລະ ມອບຕໍ່ໆກັນໄປຈາກຄົນລຸ້ນໜຶ່ງຫາ
ຄົນອີກລຸ້ນໜຶ່ງ, ແລະ ຖືກເກັບກຳ ແລະ
ປົກປັກຮັກສາໄວ້ໂດຍພຣະຫັດຂອງພຣະ
ຜູ້ເປັນເຈົ້າ ຈົນກວ່າມັນຈະເຖິງວັນເວລາທີ່
ມັນຈະອອກໄປຫາທຸກປະຊາຊາດ, ທຸກຕະ
ກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ,
ເພື່ອພວກເຂົາຈະໄດ້ຮູ້ຈັກເຖິງ [ກ]ຄວາມລຶກ
ລັບທີ່ມີຢູ່ໃນນັ້ນ.
5 ແລະ ບັດນີ້ຈົ່ງເບິ່ງ, ຖ້າຫາກພຣະອົງ
ໄດ້ຮັກສາມັນໄວ້ ມັນຈະສົດໃສຢູ່ຄືເກົ່າ;
ແທ້ຈິງແລ້ວ, ມັນຈະຍັງສົດໃສຢູ່ຄືເກົ່າ; ແທ້
ຈິງແລ້ວ, ແລະ ແຜ່ນຈາລຶກທັງໝົດ ຊຶ່ງມີຂໍ້
ຄວາມອັນເປັນພຣະຄຳພີສັກສິດຈະຍັງສົດ
ໃສຢູ່ຄືກັນ.
6 ບັດ ນີ້ ລູກ ອາດ ຈະ ຄິດ ວ່າ ມັນ ເປັນ
[ກ]ຄວາມໂງ່ຈ້າຂອງພໍ່; ແຕ່ຈົ່ງເບິ່ງ ພໍ່ເວົ້າກັບ
ລູກວ່າ ເລື່ອງ [ຂ]ເລັກນ້ອຍ ແລະ ງ່າຍໆຈະ
ນຳເລື່ອງໃຫຍ່ມາ; ແລະ ໃນຫລາຍຢ່າງວິ
ທີເລັກໆນ້ອຍໆຈະເຮັດໃຫ້ຄົນສະຫລາດ
ຍອມຈຳນົນ.
7 ແລະ ອົງພຣະຜູ້ເປັນເຈົ້າໄດ້ເຮັດວຽກ
ງານໂດຍ [ກ]ວິທີທີ່ຈະນຳຈຸດປະສົງອັນເປັນ
ນິລັນດອນຂອງພຣະອົງມາ; ແລະ ໂດຍວິ
ທີ [ຂ]ເລັກໆນ້ອຍໆທີ່ສຸດ ພຣະຜູ້ເປັນເຈົ້າ

**37** 1*ກ* ແອວ 45:2–8.
*ຂ* ມຊຍ 28:20.
2*ກ* ອນ 1:13–18; ຄມ 1:6–11; ແອວ 37:9–12.
3*ກ* 1 ນຟ 5:10–19. ຄມພ ແຜ່ນຈາລຶກ ທອງເຫລືອງ.
4*ກ* ຄມພ ຄວາມລຶກລັບ ຂອງພຣະເຈົ້າ.
6*ກ* 1 ກຣທ 2:14.
*ຂ* 1 ນຟ 16:28–29; ຄພ 64:33; 123:15–17.
7*ກ* ອຊຍ 55:8–9.
*ຂ* 2 ກສ 5:1–14.

ໄດ້ເຮັດໃຫ້ຄົນສະຫລາດຕ້ອງຈຳນົນ ແລະ
ເຮັດໃຫ້ຄວາມລອດເກີດກັບຈິດວິນຍານ
ເປັນຈຳນວນຫລວງຫລາຍ.
8 ແລະ ບັດນີ້, ຈົນເຖິງທຸກມື້ນີ້, ນີ້ຄື
ຄວາມສະຫລຽວສະຫລາດຂອງພຣະເຈົ້າ
ທີ່ຈະໃຫ້ສິ່ງເຫລົ່ານີ້ໄດ້ຮັບການປົກປັກຮັກ
ສາໄວ້; ເພາະຈົ່ງເບິ່ງ, ມັນຈະໃຫ້ຄວາມຊົງ
ຈຳຂອງຜູ້ຄົນພວກນີ້ [ກ]ດີຂຶ້ນ, ແທ້ຈິງແລ້ວ,
ມັນຈະເຮັດໃຫ້ຫລາຍຄົນສຳນຶກເຖິງຄວາມ
ຜິດຂອງຕົນ, ແລະ ນຳພວກເຂົາມາຫາ
ຄວາມຮູ້ເຖິງພຣະເຈົ້າຂອງພວກເຂົາ ເພື່ອ
ພວກເຂົາຈະໄດ້ໄປຫາຄວາມລອດຂອງ
ຈິດວິນຍານຂອງພວກເຂົາ.
9 ແທ້ຈິງແລ້ວ, ພໍ່ເວົ້າກັບລູກວ່າ, ຖ້າ
ຫາກບໍ່ [ກ]ແມ່ນຍ້ອນສິ່ງດັ່ງກ່າວນີ້ ທີ່ມີບັນ
ທຶກໄວ້ຢູ່ໃນແຜ່ນຈາລຶກເຫລົ່ານີ້ແລ້ວ,
ອຳໂມນກັບອ້າຍນ້ອງຂອງລາວຈະເຮັດໃຫ້
ຊາວເລມັນຫລາຍພັນຄົນ [ຂ]ແນ່ໃຈບໍ່ໄດ້ໃນ
ຮີດຄອງປະເພນີອັນບໍ່ຖືກຕ້ອງຂອງບັນພະ
ບຸລຸດຂອງພວກເຂົາ; ແທ້ຈິງແລ້ວ, ບັນທຶກ
ເຫລົ່ານີ້ ແລະ [ຄ]ຂໍ້ຄວາມທີ່ມີຢູ່ໃນນັ້ນໄດ້
ຊັກນຳພວກເຂົາມາສູ່ການກັບໃຈ; ແລະ
ສິ່ງເຫລົ່ານີ້ໄດ້ຊັກນຳພວກເຂົາມາສູ່ຄວາມ
ຮູ້ເລື່ອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ, ແລະ ເພື່ອຈະໄດ້ປິຕິຍິນ
ດີໃນພຣະເຢຊູຄຣິດພຣະຜູ້ໄຖ່ຂອງພວກ
ເຂົາ.
10 ແລະ ຜູ້ໃດຈະຮູ້ໄດ້ວ່າ ບັນທຶກເຫລົ່າ
ນີ້ຈະເປັນເສັ້ນທາງນຳພາພວກເຂົາຫລາຍ
ພັນຄົນມາໃຫ້ຮູ້ຈັກ, ແທ້ຈິງແລ້ວ, ແລະ
ຊາວນີໄຟພີ່ນ້ອງຂອງພວກເຮົາຫລາຍພັນ
ຄົນທີ່ແຂງຄໍ, ຜູ້ຊຶ່ງຕອນນີ້ເຮັດໃຈແຂງກະ
ດ້າງຢູ່ໃນບາບ ແລະ ຄວາມຊົ່ວຮ້າຍ, ເພື່ອ
ມາຫາຄວາມຮູ້ເລື່ອງພຣະຜູ້ໄຖ່ຂອງພວກ
ເຂົາ?
11 ບັດນີ້ຄວາມລຶກລັບເຫລົ່ານີ້ຍັງບໍ່ທັນ
ເປັນທີ່ຮູ້ໂດຍສົມບູນແກ່ພໍ່; ສະນັ້ນ ພໍ່ຈຶ່ງ
ຢຸດໄວ້ກ່ອນ.
12 ແລະ ເປັນການພຽງພໍ ຖ້າຫາກພໍ່
ພຽງແຕ່ກ່າວວ່າ ບັນທຶກເຫລົ່ານີ້ໄດ້ຮັບ
ການປົກປັກຮັກສາໄວ້ ເພື່ອຈຸດປະສົງອັນ
ສະຫລາດ, ຊຶ່ງຈຸດປະສົງນີ້ ພຣະເຈົ້າຮູ້ຈັກ;
ເພາະວ່າພຣະອົງໄດ້ [ກ]ແນະນຳດ້ວຍຄວາມ
ສະຫລຽວສະຫລາດໃນວຽກງານທັງໝົດ
ຂອງພຣະອົງ, ແລະ ທາງຂອງພຣະອົງຊື່
ຕົງ, ແລະ ທາງເດີນຂອງພຣະອົງເປັນຮອບ
ທີ່ເປັນນິລັນດອນ [ຂ]ໜຶ່ງ.
13 ໂອ້ ຈົ່ງຈື່ຈຳໄວ້, ຈື່ຈຳໄວ້, ຮີລາມັນ
ລູກຂອງພໍ່, ພຣະບັນຍັດຂອງພຣະເຈົ້ານັ້ນ
[ກ]ເຄັ່ງຄັດພຽງໃດ. ແລະ ພຣະອົງໄດ້ກ່າວ
ວ່າ: [ຂ]ຖ້າຫາກເຈົ້າຈະຮັກສາບັນຍັດຂອງ
ເຮົາ, ເຈົ້າຈະ [ຄ]ຮຸ່ງເຮືອງຢູ່ໃນແຜ່ນດິນ—
ແຕ່ຖ້າຫາກລູກບໍ່ຮັກສາພຣະບັນຍັດຂອງ
ພຣະອົງແລ້ວ ລູກຈະຖືກຕັດອອກຈາກທີ່
ປະທັບຂອງພຣະອົງ.
14 ແລະ ບັດນີ້ຈົ່ງຈື່ຈຳໄວ້, ລູກຂອງພໍ່,
ວ່າພຣະເຈົ້າ [ກ]ມອບສິ່ງເຫລົ່ານີ້ໄວ້ກັບລູກ
ຊຶ່ງເປັນສິ່ງ [ຂ]ສັກສິດ, ຊຶ່ງພຣະອົງຈະເກັບ
ກຳໄວ້ໃຫ້ສັກສິດ, ແລະ ຊຶ່ງພຣະອົງຈະ
ເກັບກຳ ແລະ ປົກປັກຮັກສາໄວ້ເພື່ອຈຸດ
ປະສົງອັນ [ຄ]ສະຫລາດຂອງພຣະອົງ, ເພື່ອ
ພຣະອົງຈະໄດ້ສະແດງອຳນາດຂອງພຣະ

8ກ 2 ຕມທ 3:15–17; ມຊຢ 1:3–5.
9ກ ມຊຢ 1:5.
ຂ ແອວ 18:36; 22:12.
ຄ ຄມພ ພຣະກິດຕິຄຸນ.
12ກ 2 ນຟ 9:28; ຢຄ 4:10.
ຂ 1 ນຟ 10:19; ແອວ 7:20.
13ກ 2 ນຟ 9:41.
ຂ ແອວ 9:13; 3 ນຟ 5:22.
ຄ ມຊຢ 1:7; ແອວ 50:20.
14ກ ຄພ 3:5.
ຂ ຄມພ ສັກສິດ, ຄວາມສັກສິດ.
ຄ 1 ນຟ 9:3–6.

ອົງອອກມາໃຫ້ຄົນລຸ້ນຫລັງເຫັນ.
15 ແລະ ບັດນີ້ຈົ່ງເບິ່ງ, ພໍ່ບອກລູກໂດຍ
ວິນຍານແຫ່ງການທຳນາຍວ່າ, ຖ້າຫາກ
ລູກລະເມີດພຣະບັນຍັດຂອງພຣະເຈົ້າ, ຈົ່ງ
ເບິ່ງ, ອຳນາດຂອງພຣະເຈົ້າຈະເອົາບັນທຶກ
ເຫລົ່ານີ້ໄປຈາກລູກ, ແລະ ລູກຈະຖືກສົ່ງ
ໄປຫາຊາຕານ, ເພື່ອມັນຈະໄດ້ຝັດລູກຄື
ກັນກັບຂີ້ແກບຢູ່ຕໍ່ໜ້າລົມ.
16 ແຕ່ຖ້າຫາກລູກຈະຮັກສາພຣະບັນ
ຍັດຂອງພຣະເຈົ້າ, ແລະ ຈະປະຕິບັດຕໍ່ສິ່ງ
ສັກສິດເຫລົ່ານີ້ຕາມທີ່ພຣະຜູ້ເປັນເຈົ້າໄດ້
ບັນຊາລູກ, (ລູກຈະຕ້ອງວິງວອນຫາພຣະ
ຜູ້ເປັນເຈົ້າສຳລັບທຸກສິ່ງທຸກຢ່າງ ບໍ່ວ່າ
ແນວໃດກໍຕາມ ເພື່ອລູກຈະປະຕິບັດຕໍ່ສິ່ງ
ເຫລົ່ານີ້) ຈົ່ງເບິ່ງ, ບໍ່ມີອຳນາດຂອງແຜ່ນ
ດິນໂລກ ຫລື ນະລົກຈະສາມາດ [ກ]ເອົາມັນ
ໄປຈາກລູກໄດ້, ເພາະພຣະເຈົ້າມີອຳນາດ
ທີ່ຈະເຮັດໃຫ້ພຣະຄຳຂອງພຣະອົງສຳເລັດ
ທັງໝົດ.
17 ເພາະວ່າພຣະອົງຈະເຮັດໃຫ້ຄຳສັນ
ຍາຂອງພຣະອົງ ຊຶ່ງພຣະອົງໄດ້ເຮັດໄວ້ກັບ
ລູກສຳເລັດທັງໝົດ, ເພາະພຣະອົງໄດ້ເຮັດ
ໃຫ້ຄຳສັນຍາຂອງພຣະອົງ ຊຶ່ງເຮັດໄວ້ກັບ
ບັນພະບຸລຸດຂອງພວກເຮົາສຳເລັດແລ້ວ.
18 ເພາະພຣະອົງໄດ້ສັນຍາກັບຄົນ
ເຫລົ່ານັ້ນວ່າ ພຣະອົງຈະ [ກ]ປົກປັກຮັກສາ
ສິ່ງເຫລົ່ານີ້ໄວ້ເພື່ອຈຸດປະສົງອັນສະຫລາດ
ຂອງພຣະອົງ, ເພື່ອພຣະອົງຈະໄດ້ສະແດງ
ອຳນາດຂອງພຣະອົງອອກມາໃຫ້ຄົນລຸ້ນ
ຫລັງເຫັນ.
19 ແລະ ບັດນີ້ຈົ່ງເບິ່ງ, ພຣະອົງໄດ້ເຮັດ
ໃຫ້ຈຸດປະສົງຢ່າງໜຶ່ງຂອງພຣະອົງສຳເລັດ
ແລ້ວ, ຈົນວ່າເຮັດໃຫ້ຊາວເລມັນ [ກ]ຫລາຍ
ພັນຄົນກັບຄືນມາຫາຄວາມຮູ້ເລື່ອງຄວາມ
ຈິງ; ແລະ ພຣະອົງໄດ້ສະແດງອຳນາດຂອງ
ພຣະອົງອອກມາຈາກສິ່ງເຫລົ່ານີ້, ແລະ
ພຣະອົງຈະສະແດງອຳນາດຂອງພຣະອົງ
ອອກມາຈາກສິ່ງເຫລົ່ານີ້ອີກໃຫ້ແກ່ຄົນລຸ້ນ
[ຂ]ຕໍ່ໄປ; ສະນັ້ນ ສິ່ງເຫລົ່ານີ້ຈະຕ້ອງໄດ້ຮັບ
ການປົກປັກຮັກສາໄວ້.
20 ສະນັ້ນ ພໍ່ຈຶ່ງສັ່ງເຈົ້າ, ຮີລາມັນລູກ
ຂອງພໍ່, ໃຫ້ລູກພາກພຽນພະຍາຍາມໃນ
ການເຮັດໃຫ້ຄຳເວົ້າຂອງພໍ່ສຳເລັດທັງ
ໝົດ, ແລະ ໃຫ້ລູກພາກພຽນພະຍາຍາມ
ໃນການຮັກສາພຣະບັນຍັດຂອງພຣະເຈົ້າ
ຄືກັນກັບທີ່ມີຂຽນໄວ້.
21 ແລະ ບັດນີ້, ພໍ່ຈະເວົ້າກັບລູກກ່ຽວກັບ
ແຜ່ນຈາລຶກ [ກ]ຊາວສີ່ແຜ່ນນີ້, ໃຫ້ລູກເກັບ
ກຳມັນໄວ້, ເພື່ອວ່າຄວາມລຶກລັບ ແລະ
ວຽກງານແຫ່ງຄວາມມືດ, ແລະ ວຽກງານ
[ຂ]ລັບທັງໝົດ, ຫລື ວຽກງານລັບຂອງຜູ້ຄົນ
ຜູ້ຖືກທຳລາຍໄປແລ້ວ, ຈະສະແດງໃຫ້
ປະຈັກແກ່ຜູ້ຄົນພວກນີ້; ແທ້ຈິງແລ້ວ, ການ
ຄາດຕະກຳທັງໝົດຂອງພວກເຂົາ, ແລະ
ການຂີ້ລັກມັກສົກ, ແລະ ການປຸ້ນຈີ້, ແລະ
ຄວາມຊົ່ວຮ້າຍ, ແລະ ຄວາມໜ້າກຽດຊັງ
ທັງໝົດຂອງພວກເຂົາ, ຈະສະແດງໃຫ້
ປະຈັກແກ່ຜູ້ຄົນພວກນີ້; ແທ້ຈິງແລ້ວ, ແລະ
ວ່າໃຫ້ລູກປົກປັກຮັກສາ [ຄ]ສິ່ງແປຄວາມ
ໝາຍເຫລົ່ານີ້ໄວ້.
22 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າເຫັນ
ວ່າຜູ້ຄົນຂອງພຣະອົງເລີ່ມເຮັດວຽກງານ
ໃນຄວາມມືດ, ແທ້ຈິງແລ້ວ, ເຮັດການຄາດ
ຕະກຳ ແລະ ສິ່ງທີ່ໜ້າກຽດຊັງທີ່ເປັນຄວາມ
ລັບ; ສະນັ້ນ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ,
ຖ້າຫາກພວກເຂົາເຫລົ່ານັ້ນບໍ່ກັບໃຈ, ແລ້ວ

16 *ກ* ຈສ—ປ 1:59.
18 *ກ* ຄພ 5:9.
19 *ກ* ແອວ 23:5.
*ຂ* ອນ 1:13; ມມ 7:8–10.
21 *ກ* ອທ 1:1–5.
*ຂ* ຄມພ ການມົ້ວສຸມລັບ.
*ຄ* ຄມພ ອຸລີມ ແລະ ທຸມມີມ.

ພວກ ເຂົາ ຈະ ຖືກ ທຳ ລາຍ ອອກ ຈາກ ພື້ນ
ແຜ່ນດິນໂລກ.
23 ແລະ ພຣະເຈົ້າໄດ້ກ່າວວ່າ: ເຮົາຈະ
ຕຽມ [ກ]ຫີນກ້ອນໜຶ່ງໄວ້ໃຫ້ກາເຊເລັມ ຊຶ່ງ
ເປັນ ຜູ້ຮັບ ໃຊ້ຂອງເຮົາ, ຊຶ່ງ ມັນຈະສ່ອງ
ແສງສະຫວ່າງອອກມາສູ່ຄວາມມືດ, ເພື່ອ
ເຮົາຈະເຮັດໃຫ້ຜູ້ຄົນຊຶ່ງຮັບໃຊ້ເຮົາຮູ້ຈັກ
ເພື່ອເຮົາຈະເຮັດໃຫ້ພວກເຂົາຮູ້ຈັກວຽກ
ງານຂອງພີ່ນ້ອງຂອງພວກເຂົາ, ແທ້ຈິງ
ແລ້ວ, ວຽກງານລັບ ແລະ ວຽກງານແຫ່ງ
ຄວາມມືດ, ແລະ ຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງຂອງພວກເຂົາ.
24 ແລະ ບັດ ນີ້, ລູກຂອງພໍ່, ສິ່ງ ແປ
ຄວາມໝາຍເຫລົ່ານີ້ມີຕຽມໄວ້ເພື່ອພຣະ
ຄຳຂອງພຣະເຈົ້າຈະໄດ້ສຳເລັດ, ຊຶ່ງພຣະ
ອົງໄດ້ກ່າວ, ມີຄວາມວ່າ:
25 ເຮົາຈະ [ກ]ນຳເອົາວຽກງານລັບຂອງ
ພວກເຂົາອອກຈາກຄວາມມືດໄປຫາແສງ
ສະຫວ່າງ; ແລະ ຖ້າຫາກພວກເຂົາບໍ່ກັບ
ໃຈ ເຮົາຈະ [ຂ]ທຳລາຍພວກເຂົາອອກຈາກ
ພື້ນແຜ່ນດິນໂລກ; ແລະ ເຮົາຈະນຳເອົາ
ຄວາມລັບ ແລະ ຄວາມໜ້າກຽດຊັງທັງໝົດ
ຂອງພວກເຂົາໄປຫາຄວາມສະຫວ່າງໃຫ້
ແກ່ທຸກປະຊາຊາດທີ່ຈະມາເປັນເຈົ້າຂອງ
ແຜ່ນດິນຕໍ່ຈາກນີ້ໄປ.
26 ແລະ ບັດນີ້, ລູກຂອງພໍ່, ພວກເຮົາ
ເຫັນວ່າ ພວກເຂົາບໍ່ໄດ້ກັບໃຈ; ສະນັ້ນ
ພວກເຂົາຈຶ່ງຖືກທຳລາຍ ແລະ ພຣະຄຳ
ຂອງພຣະເຈົ້າທີ່ເວົ້າໄວ້ຈຶ່ງສຳເລັດດັ່ງນີ້;
ແທ້ຈິງແລ້ວ, ຄວາມໜ້າກຽດຊັງອັນລັບໆ
ຂອງ ພວກເຂົາຖືກນຳອອກຈາກຄວາມມືດ
ແລະ ເຮັດໃຫ້ເປັນທີ່ຮູ້ຈັກແກ່ພວກເຮົາ.
27 ແລະ ບັດນີ້, ລູກຂອງພໍ່, ພໍ່ສັ່ງໃຫ້ລູກ
ຮັກສາຄຳສາບານຂອງພວກເຂົາ, ແລະ ຄຳ
ໝັ້ນສັນຍາຂອງພວກເຂົາ, ແລະ ຂໍ້ຕົກລົງ
ໃນຄວາມໜ້າກຽດຊັງອັນລັບໆຂອງພວກ
ເຂົາໄວ້ໃຫ້ໝົດ; ແທ້ຈິງແລ້ວ, ແລະ ລູກ
ຈະເກັບກຳ [ກ]ເຄື່ອງໝາຍ ແລະ ການແປກ
ປະຫລາດທັງໝົດຂອງພວກເຂົາຈາກຜູ້
ຄົນພວກນີ້, ເພື່ອພວກເຂົາຈະບໍ່ຮູ້ຈັກມັນ,
ຖ້າບໍ່ດັ່ງນັ້ນ ພວກເຂົາອາດຈະຕົກໄປໃນ
ຄວາມມືດ ແລະ ຖືກທຳລາຍໄປ.
28 ເພາະຈົ່ງເບິ່ງ, ມີ [ກ]ການສາບແຊ່ງຢູ່
ທົ່ວແຜ່ນດິນ, ຄືຄວາມຈິບຫາຍຈະເກີດກັບ
ຄົນທັງໝົດທີ່ເປັນຄົນງານແຫ່ງຄວາມມືດ
ຕາມອຳນາດຂອງພຣະເຈົ້າ, ເມື່ອພວກເຂົາ
ສຸກເຕັມທີ່; ສະນັ້ນ ພໍ່ຈຶ່ງບໍ່ຢາກໃຫ້ຜູ້ຄົນ
ພວກນີ້ຖືກທຳລາຍ.
29 ສະນັ້ນ ລູກຈົ່ງເກັບກຳແຜນການລັບ
ເຫລົ່ານີ້ໄວ້ ຊຶ່ງເປັນ [ກ]ຄຳສາບານຂອງພວກ
ເຂົາໃຫ້ລອດຈາກຜູ້ຄົນພວກນີ້, ແລະ ລູກ
ຈົ່ງໃຫ້ພວກເຂົາຮູ້ພຽງແຕ່ຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງພວກເຂົາ
ເທົ່ານັ້ນ; ແລະ ລູກຈົ່ງສິດສອນພວກເຂົາ
ໃຫ້ [ຂ]ກຽດຊັງຄວາມຊົ່ວຮ້າຍ ແລະ ຄວາມ
ໜ້າກຽດຊັງ ແລະ ການຄາດຕະກຳທັງໝົດ;
ແລະ ລູກຈົ່ງສິດສອນພວກເຂົາອີກວ່າ ຄົນ
ເຫລົ່ານັ້ນຖືກທຳລາຍໄປເນື່ອງຈາກວ່າ
ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ
ແລະ ການຄາດຕະກຳຂອງພວກເຂົາເອງ.
30 ເພາະຈົ່ງເບິ່ງ, ພວກເຂົາໄດ້ຂ້າສາດ
ສະດາທັງໝົດຂອງພຣະຜູ້ເປັນເຈົ້າ ຜູ້ມາ
ຫາພວກເຂົາເພື່ອປະກາດແກ່ພວກເຂົາ
ກ່ຽວກັບຄວາມຊົ່ວຮ້າຍຂອງພວກເຂົາ;
ແລະ ເລືອດຂອງພວກເພິ່ນເຫລົ່ານັ້ນໄດ້
ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະ

23 *ກ* ມຊຢ 8:13.
25 *ກ* ຄພ 88:108–110.
*ຂ* ມຊຢ 21:26.
27 *ກ* ຮລມ 6:22.
28 *ກ* ແອວ 45:16;
ອທ 2:7–12.
29 *ກ* ຮລມ 6:25.
*ຂ* ແອວ 13:12.

ເຈົ້າຂອງພວກເພິ່ນ ເພື່ອການແກ້ແຄ້ນຜູ້
ທີ່ຂ້າພວກເພິ່ນ ແລະ ການພິພາກສາຂອງ
ພຣະເຈົ້າໄດ້ເກີດຂຶ້ນດັ່ງນີ້ກັບຄົນງານແຫ່ງ
ຄວາມມືດ ແລະ ກັບຜູ້ທີ່ເຮັດການມົ້ວສຸມ
ລັບເຫລົ່ານັ້ນ.
31 ແທ້ຈິງແລ້ວ, ແລະ ແຜ່ນດິນຖືກສາບ
ແຊ່ງຕະຫລອດໄປ ແລະ ຕະຫລອດການ
ສຳລັບຄົນງານແຫ່ງຄວາມມືດ ແລະ ກັບຜູ້
ທີ່ເຮັດການມົ້ວສຸມລັບເຫລົ່ານັ້ນ, ຈົນເຖິງ
ຄວາມພິນາດ, ຖ້າຫາກພວກເຂົາບໍ່ກັບໃຈ
ກ່ອນພວກເຂົາຈະສຸກເຕັມທີ່.
32 ແລະ ບັດນີ້, ລູກຂອງພໍ່, ຈົ່ງຈື່ຈຳຄຳ
ເວົ້າທີ່ພໍ່ໄດ້ເວົ້າກັບລູກ; ຢ່າໄດ້ມອບແຜນ
ການລັບເຫລົ່ານີ້ໃຫ້ແກ່ຜູ້ຄົນພວກນີ້, ແຕ່
ຈົ່ງສິດສອນພວກເຂົາໃຫ້ [ກ]ກຽດຊັງບາບ
ແລະ ຄວາມຊົ່ວຮ້າຍອັນເປັນນິດ.
33 ຈົ່ງ [ກ]ສັ່ງສອນເຖິງການກັບໃຈ ແລະ
ສັດທາໃນອົງພຣະເຢຊູຄຣິດເຈົ້າແກ່ພວກ
ເຂົາ; ຈົ່ງສິດສອນພວກເຂົາໃຫ້ຖ່ອມຕົວ
ແລະ [ຂ]ອ່ອນໂຍນ ແລະ ຕ່ຳຕ້ອຍໃນໃຈ; ຈົ່ງ
ສິດສອນພວກເຂົາໃຫ້ຕ້ານທານກັບ [ຄ]ການ
ລໍ້ລວງທຸກຢ່າງຂອງມານ, ດ້ວຍສັດທາ
ຂອງພວກເຂົາຊຶ່ງມີໃນອົງພຣະເຢຊູຄຣິດ
ເຈົ້າ.
34 ຈົ່ງສິດສອນພວກເຂົາບໍ່ໃຫ້ເບື່ອໜ່າຍ
ວຽກງານດີ, ແຕ່ໃຫ້ອ່ອນໂຍນ ແລະ ຕ່ຳ
ຕ້ອຍໃນໃຈ; ເພາະວ່າຄົນເຊັ່ນນັ້ນ ຈະພົບ
ທີ່ [ກ]ພັກຜ່ອນໃຫ້ແກ່ຈິດວິນຍານຂອງຕົນ.
35 ໂອ້, ຈົ່ງຈື່ຈຳໄວ້, ລູກຂອງພໍ່, ແລະ ຈົ່ງ
ຮຽນຮູ້ [ກ]ປັນຍາໃນໄວໜຸ່ມຂອງລູກ; ແທ້ຈິງ
ແລ້ວ, ຈົ່ງຮຽນຮູ້ໃນໄວໜຸ່ມຂອງລູກ ເພື່ອ
ຮັກສາພຣະບັນຍັດຂອງພຣະເຈົ້າ.
36 ແທ້ຈິງແລ້ວ, ແລະ ຈົ່ງ [ກ]ເອີ້ນຫາພຣະ
ເຈົ້າ ເພື່ອລູກຈະໄດ້ຮັບຄວາມຊ່ວຍເຫລືອ
ທັງໝົດ; ແທ້ຈິງແລ້ວ, ຂໍໃຫ້ການກະທຳທັງ
ໝົດຂອງລູກຢູ່ກັບພຣະຜູ້ເປັນເຈົ້າ, ແລະ
ບໍ່ວ່າລູກຈະໄປບ່ອນໃດກໍຕາມ ກໍໃຫ້ວຽກ
ງານຂອງລູກນັ້ນຢູ່ກັບພຣະຜູ້ເປັນເຈົ້າ;
ແທ້ຈິງແລ້ວ, ຂໍໃຫ້ຄວາມຄິດຂອງລູກລະ
ນຶກຫາພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ຂໍ
ໃຫ້ຄວາມຮັກໃນໃຈຂອງລູກວາງໄວ້ຢູ່ກັບ
ພຣະຜູ້ເປັນເຈົ້າຕະຫລອດໄປ.
37 ຈົ່ງ [ກ]ປຶກສານຳພຣະຜູ້ເປັນເຈົ້າໃນ
ການກະທຳທັງໝົດຂອງລູກ, ແລະ ພຣະ
ອົງຈະຊີ້ທາງໃຫ້ລູກເພື່ອຄວາມດີ; ແທ້ຈິງ
ແລ້ວ, ເວລາລູກນອນລົງຕອນກາງຄືນກໍ
ຈົ່ງນອນຢູ່ກັບພຣະຜູ້ເປັນເຈົ້າ, ເພື່ອພຣະ
ອົງຈະໄດ້ດູແລລູກເວລາລູກນອນ; ແລະ
ເວລາລູກຕື່ນຂຶ້ນຕອນເຊົ້າ ກໍຂໍໃຫ້ໃຈຂອງ
ລູກເຕັມໄປດ້ວຍຄວາມ [ຂ]ຂອບພຣະໄທ
ພຣະເຈົ້າ; ແລະ ຖ້າຫາກລູກເຮັດສິ່ງເຫລົ່າ
ນີ້, ລູກຈະຖືກຍົກຂຶ້ນໃນວັນສຸດທ້າຍ.
38 ແລະ ບັດນີ້, ລູກຂອງພໍ່, ພໍ່ມີແນວ
ໜຶ່ງທີ່ຈະເວົ້າກ່ຽວກັບສິ່ງທີ່ບັນພະບຸລຸດ
ຂອງພວກເຮົາເອີ້ນວ່າ ລູກກົມ ຫລື ເຂັມຊີ້
ທິດ—ຫລື ບັນພະບຸລຸດຂອງພວກເຮົາເອີ້ນ
ວ່າ [ກ]ເລຍໂຮນາ, ຊຶ່ງແປວ່າ ເຂັມຊີ້ທິດ; ຊຶ່ງ
ພຣະຜູ້ເປັນເຈົ້າໄດ້ຕຽມມັນໄວ້ໃຫ້.
39 ແລະ ຈົ່ງເບິ່ງ, ບໍ່ມີຜູ້ໃດເລີຍທີ່ຈະເຮັດ
ວຽກແບບນີ້ໄດ້ດ້ວຍຝີມືອັນແປກປະຫລາດ
ແບບນີ້. ແລະ ເບິ່ງແມ ມັນຖືກຕຽມໄວ້ໃຫ້
ບັນພະບຸລຸດຂອງພວກເຮົາເພື່ອຊີ້ທາງທີ່

32ກ 2 ນຟ 4:31.
33ກ ຄມພ ສັ່ງສອນ.
ຂ ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
ຄ ຄມພ ລໍ້ລວງ, ການລໍ້ລວງ.
34ກ ພສສ 37:4–7; ມທ 11:28–30.
35ກ ຄມພ ສະຕິປັນຍາ.
36ກ ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
37ກ ຢຄ 4:10; ຄພ 3:4.
ຂ ຄພ 46:32.
38ກ 1 ນຟ 16:10; 18:12; ຄພ 17:1.

ເຂົາເຈົ້າຄວນເດີນໄປໃນຖິ່ນແຫ້ງແລ້ງກັນ
ດານ.
40 ແລະ ມັນ ໄດ້ ເຮັດ ວຽກ ໃຫ້ ເຂົາ ເຈົ້າ
ຕາມ [ກ]ສັດທາ ຂອງ ເຂົາ ເຈົ້າ ທີ່ ມີ ໃນ ພຣະ
ເຈົ້າ; ສະນັ້ນ, ຖ້າຫາກ ເຂົາເຈົ້າ ມີ ສັດທາ
ແລະ ມີຄວາມເຊື່ອ ວ່າ ພຣະເຈົ້າ ເຮັດ ໃຫ້
ເຂັມຂອງມັນຊີ້ໄປຕາມທາງທີ່ຄວນໄປ, ຈົ່ງ
ເບິ່ງ, ມັນກໍເປັນໄປເຊັ່ນນັ້ນ; ສະນັ້ນ ເຂົາ
ເຈົ້າຈຶ່ງ ມີ ສິ່ງ ມະຫັດ ສະຈັນ ນີ້ ແລະ ສິ່ງ
ມະຫັດສະຈັນອື່ນໆອີກຫລາຍຢ່າງ ຊຶ່ງເກີດ
ຈາກອຳນາດຂອງພຣະເຈົ້າ, ມື້ແລ້ວມື້ເລົ່າ.
41 ເຖິງຢ່າງໃດກໍຕາມ, ສິ່ງມະຫັດສະຈັນ
ເຫລົ່ານີ້ໄດ້ເຮັດວຽກໂດຍວິທີ [ກ]ເລັກໆ
ນ້ອຍໆ. ມັນໄດ້ສະແດງຜົນງານທີ່ໜ້າອັດ
ສະຈັນແກ່ເຂົາເຈົ້າ. ເຂົາເຈົ້າກຽດຄ້ານ,
ແລະ ລືມໃຊ້ສັດທາ ແລະ ຄວາມພາກພຽນ
ຂອງຕົນ, ແລ້ວວຽກງານທີ່ໜ້າອັດສະຈັນ
ເຫລົ່ານັ້ນກໍຢຸດສະງັກໄປ, ແລະ ເຂົາເຈົ້າ
ຈຶ່ງບໍ່ກ້າວໜ້າໃນການເດີນທາງຂອງເຂົາ
ເຈົ້າ.
42 ສະນັ້ນ, ເຂົາເຈົ້າຈຶ່ງວົນວຽນຢູ່ໃນຖິ່ນ
ແຫ້ງແລ້ງກັນດານ, ຫລື ບໍ່ໄດ້ເດີນທາງຊື່
ໄປຫາຈຸດໝາຍປາຍທາງ, ແລະ ເປັນທຸກ
ດ້ວຍ ຄວາມຫິວເຂົ້າຫິວນ້ຳ, ຍ້ອນການ
ລ່ວງລະເມີດຂອງເຂົາເຈົ້າ.
43 ແລະ ບັດນີ້, ລູກຂອງພໍ່, ພໍ່ຢາກໃຫ້
ລູກເຂົ້າໃຈວ່າ ສິ່ງເຫລົ່ານີ້ບໍ່ໄດ້ປາດສະ
ຈາກເງົາຂອງມັນ; ເພາະວ່າເວລາບັນພະ
ບຸລຸດຂອງພວກເຮົາກຽດຄ້ານທີ່ຈະເອົາ
ໃຈໃສ່ເຂັມຊີ້ທິດນີ້ (ສິ່ງເຫລົ່ານີ້ເປັນເລື່ອງ
ຂອງທາງໂລກ) ເຂົາເຈົ້າກໍບໍ່ໄດ້ຈະເລີນຮຸ່ງ
ເຮືອງກັບສິ່ງເປັນທາງວິນຍານ.
44 ເພາະຈົ່ງເບິ່ງ, ມັນງ່າຍທີ່ຈະເອົາໃຈ
ໃສ່ຕໍ່ [ກ]ພຣະຄຳຂອງພຣະຄຣິດ, ຊຶ່ງຈະຊີ້
ທາງຊື່ໃຫ້ລູກໄປຫາຄວາມສຸກ, ດັ່ງທີ່ເປັນ
ມາກັບບັນພະບຸລຸດຂອງພວກເຮົາທີ່ໄດ້
ເອົາໃຈໃສ່ກັບເຂັມຊີ້ທິດນີ້, ຊຶ່ງຈະຊີ້ທາງຊື່
ໄປຫາແຜ່ນດິນແຫ່ງຄຳສັນຍາ.
45 ແລະ ບັດນີ້ພໍ່ຂໍຖາມວ່າ, ບໍ່ມີແບບ
ຢ່າງໃນສິ່ງເຫລົ່ານີ້ບໍ? ເພາະໂດຍແນ່
ນອນທີ່ເຂັມຊີ້ທິດນີ້ໄດ້ນຳພາບັນພະບຸລຸດ
ຂອງພວກເຮົາ ໂດຍເດີນຕາມການຊີ້ທາງ
ຂອງມັນມາສູ່ແຜ່ນດິນທີ່ສັນຍາໄວ້, ພຣະ
ຄຳຂອງພຣະຄຣິດກໍເໝືອນກັນ, ຖ້າຫາກ
ພວກເຮົາປະຕິບັດຕາມນັ້ນ ມັນກໍຈະນຳພາ
ພວກເຮົາໃຫ້ພົ້ນຫຸບເຂົາແຫ່ງຄວາມເສົ້າ
ສະຫລົດໃຈ ແລ້ວໄປຫາໂລກທີ່ສັນຍາໄວ້
ທີ່ດີກວ່າ.
46 ໂອ້ ລູກຂອງພໍ່, ຂໍຢ່າໃຫ້ພວກເຮົາ
ມີ [ກ]ຄວາມກຽດຄ້ານຍ້ອນວ່າຄວາມງ່າຍ
ຂອງ [ຂ]ເສັ້ນທາງນັ້ນ; ເພາະວ່າມັນໄດ້ເປັນ
ມາແລ້ວກັບບັນພະບຸລຸດຂອງພວກເຮົາ;
ເພາະວ່າມັນໄດ້ຕຽມໄວ້ແບບນັ້ນສຳລັບ
ເຂົາເຈົ້າ, ວ່າຖ້າຫາກເຂົາເຈົ້າຫລຽວເຫັນ,
ເຂົາເຈົ້າກໍຈະມີ [ຄ]ຊີວິດ; ມັນກໍຈະເປັນເຊັ່ນ
ນັ້ນກັບພວກເຮົາ. ທາງໄດ້ຖືກຕຽມໄວ້
ແລ້ວ, ແລະ ຖ້າຫາກພວກເຮົາຈະຫລຽວ
ເບິ່ງ ພວກເຮົາຈະມີຊີວິດຕະຫລອດການ.
47 ແລະ ບັດນີ້, ລູກຂອງພໍ່, ຈົ່ງເບິ່ງວ່າ
ລູກຮັກສາສິ່ງສັກສິດເຫລົ່ານີ້ໄວ້, ແທ້ຈິງ
ແລ້ວ, ຈົ່ງເບິ່ງວ່າລູກຫວັງເພິ່ງພຣະເຈົ້າ
ແລະ ມີຊີວິດ. ຈົ່ງໄປຫາຜູ້ຄົນພວກນີ້ ແລະ
ປະກາດພຣະຄຳ, ແລະ ຈົ່ງມີຄວາມເອົາໃຈ
ໃສ່. ລາກ່ອນ, ລູກຂອງພໍ່.

40 *ກ* 1 ນຟ 16:28.
41 *ກ* ແອວ 37:6–7.
44 *ກ* ພສສ 119:105;
1 ນຟ 11:25;
ຣລມ 3:29–30.
46 *ກ* 1 ນຟ 17:40–41.
*ຂ* ຢຣ 14:5–6;
2 ນຟ 9:41; 31:17–21;
ຄພ 132:22, 25.
*ຄ* ຢຣ 11:25;
ຣລມ 8:15;
3 ນຟ 15:9.

ຄຳສັ່ງຂອງແອວມາໃຫ້ແກ່ຊິບລັນລູກຊາຍຂອງເພິ່ນ.

*ມີບັນທຶກໄວ້ໃນບົດທີ 38.*

## ບົດທີ 38

*ຊິບ ລັນ ຖືກ ຂົ່ມເຫັງ ເພາະ ເຫັນ ແກ່ຄວາມຊອບທຳ—ຄວາມລອດມາຈາກພຣະຄຣິດ, ຜູ້ຊຶ່ງເປັນຊີວິດ ແລະ ຄວາມສະຫວ່າງຂອງໂລກ—ຄວບຄຸມກິເລດຕັນຫາທັງໝົດ. ປະມານ 74 ປີ ກ່ອນ ຄ.ສ.*

1 ລູກ ຂອງ ພໍ່, ຈົ່ງ ຟັງ ຄຳ ເວົ້າ ຂອງ ພໍ່, ເພາະວ່າພໍ່ເວົ້າກັບລູກຄືກັນກັບທີ່ພໍ່ໄດ້ເວົ້າກັບຮີລາມັນວ່າ, ຕາບໃດທີ່ລູກຈະຮັກສາພຣະບັນຍັດຂອງພຣະເຈົ້າ ລູກຈະຮຸ່ງເຮືອງຢູ່ໃນແຜ່ນດິນ; ແລະ ຕາບໃດທີ່ລູກຈະບໍ່ຮັກສາພຣະບັນຍັດຂອງພຣະເຈົ້າ ແລ້ວລູກຈະຖືກຕັດອອກຈາກທີ່ປະທັບຂອງພຣະອົງ.

2 ແລະ ບັດ ນີ້, ລູກ ຂອງ ພໍ່, ພໍ່ ໄວ້ ວາງໃຈວ່າ ພໍ່ຈະມີຄວາມສຸກຫລາຍທີ່ສຸດກັບລູກ, ຍ້ອນຄວາມສະໝ່ຳສະເໝີຂອງລູກ; ແລະ ຄວາມຊື່ສັດຂອງລູກທີ່ມີຕໍ່ພຣະເຈົ້າ; ເພາະວ່າໃນເວລາໄວໜຸ່ມຂອງລູກ, ລູກເລີ່ມຫວັງເພິ່ງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງລູກ, ສະນັ້ນພໍ່ຈຶ່ງຫວັງວ່າ ລູກຈະຮັກສາພຣະບັນຍັດຂອງພຣະອົງ [ກ]ຕໍ່ໄປ; ເພາະວ່າຜູ້ທີ່ [ຂ]ອົດທົນຈົນເຖິງທີ່ສຸດຍ່ອມເປັນສຸກ.

3 ພໍ່ ເວົ້າ ກັບ ເຈົ້າ, ລູກ ຂອງ ພໍ່, ວ່າ ພໍ່ ມີຄວາມສຸກທີ່ສຸດກັບລູກມາຢູ່ແລ້ວ, ຍ້ອນວ່າຄວາມຊື່ສັດ ແລະ ຄວາມພາກພຽນຂອງລູກ, ແລະ ຄວາມອົດທົນຂອງລູກ ແລະ ຄວາມອົດກັ້ນຂອງລູກໃນບັນດາຜູ້ຄົນຂອງ [ກ]ຊາວໂຊຣຳ.

4 ເພາະພໍ່ ຮູ້ວ່າ ລູກຢູ່ ໃນ ພັນທະ ການ; ແທ້ ຈິງ ແລ້ວ, ແລະ ພໍ່ຮູ້ອີກວ່າ ລູກຖືກແກວ່ງກ້ອນຫີນໃສ່ເພື່ອເຫັນແກ່ພຣະຄຳ; ແລະ ລູກໄດ້ຮັບເອົາສິ່ງເຫລົ່ານີ້ໄວ້ທັງໝົດດ້ວຍ [ກ]ຄວາມອົດທົນ ຍ້ອນວ່າພຣະຜູ້ເປັນເຈົ້າໄດ້ສະຖິດ [ຂ]ຢູ່ກັບລູກ; ແລະ ບັດນີ້ລູກຮູ້ຈັກແລ້ວວ່າ ພຣະຜູ້ເປັນເຈົ້າໄດ້ປົດປ່ອຍລູກແລ້ວ.

5 ແລະ ບັດນີ້ຊິບລັນ, ລູກຂອງພໍ່, ພໍ່ຢາກໃຫ້ລູກຈື່ຈຳໄວ້ວ່າ, ຕາບໃດທີ່ລູກຈະ [ກ]ໄວ້ວາງໃຈໃນພຣະເຈົ້າ ລູກກໍຈະໄດ້ຮັບການ [ຂ]ປົດປ່ອຍຈາກຄວາມເດືອດຮ້ອນ, ຈາກ [ຄ]ຄວາມຫຍຸ້ງຍາກ, ແລະ ຈາກຄວາມທຸກຂອງລູກ, ແລະ ລູກຈະຖືກຍົກຂຶ້ນໃນວັນສຸດທ້າຍ.

6 ບັດນີ້, ລູກຂອງພໍ່, ພໍ່ບໍ່ຢາກໃຫ້ລູກຄິດວ່າ ພໍ່ຮູ້ຈັກເລື່ອງເຫລົ່ານີ້ດ້ວຍຕົວເອງ, ແຕ່ເປັນຍ້ອນພຣະວິນຍານຂອງພຣະເຈົ້າທີ່ສະຖິດຢູ່ກັບພໍ່ ຊຶ່ງໄດ້ເຮັດໃຫ້ເລື່ອງເຫລົ່ານີ້ເປັນທີ່ຮູ້ຈັກແກ່ພໍ່; ເພາະວ່າຖ້າຫາກພໍ່ບໍ່ໄດ້ [ກ]ເກີດຈາກພຣະເຈົ້າແລ້ວ ພໍ່ກໍຈະບໍ່ຮູ້ຈັກເລື່ອງເຫລົ່ານີ້ເລີຍ.

7 ແຕ່ຈົ່ງເບິ່ງ, ໃນພຣະເມດຕາປານີອັນຍິ່ງໃຫຍ່ຂອງພຣະອົງ, ພຣະເຈົ້າໄດ້ສົ່ງ [ກ]ທູດອົງໜຶ່ງຂອງພຣະອົງລົງມາປະກາດແກ່ພໍ່ວ່າ ພໍ່ຕ້ອງຢຸດ [ຂ]ການທຳລາຍໃນບັນ

---

**38** 2 *ກ* ແອວ 63:1–2.
*ຂ* 2 ນຟ 31:15–20; 3 ນຟ 15:9; 27:6, 16–17.
3 *ກ* ແອວ 31:7.
4 *ກ* ຄມພ ອົດທົນ, ຄວາມອົດທົນ.
*ຂ* ຣມ 8:35–39.
5 *ກ* ແອວ 36:27. ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
*ຂ* ມທ 11:28–30.
*ຄ* ຄພ 3:8; 121:7–8.
6 *ກ* ແອວ 36:26; ຄພ 5:16. ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.
7 *ກ* ມຊຢ 27:11–17.
*ຂ* ແອວ 26:17–18; 36:6–11.

ດາຜູ້ຄົນຂອງພຣະອົງ; ແທ້ຈິງແລ້ວ, ພໍ່ໄດ້
ເຫັນທູດໜ້າຕໍ່ໜ້າ, ແລະ ເພິ່ນໄດ້ກ່າວກັບ
ພໍ່, ແລະ ສຽງຂອງເພິ່ນດັງຄືກັບຟ້າຮ້ອງ,
ແລະ ມັນເຮັດໃຫ້ທັງແຜ່ນດິນໂລກສັ່ນສະ
ເທືອນ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພໍ່
ໄດ້ຢູ່ໃນຄວາມເຈັບປວດຢ່າງຂົມຂື່ນທີ່
ສຸດຂອງຈິດວິນຍານເປັນເວລາສາມມື້
ສາມຄືນ; ແລະ ພໍ່ບໍ່ເຄີຍໄດ້ຮັບ [ກ]ການປົດ
ບາບຂອງພໍ່ເລີຍຈົນກະທັ້ງພໍ່ໄດ້ຮ້ອງທູນຂໍ
ຄວາມເມດຕາຈາກອົງພຣະເຢຊູຄຣິດເຈົ້າ.
ແຕ່ຈົ່ງເບິ່ງ, ພໍ່ໄດ້ຮ້ອງຫາພຣະອົງ ແລະ ພໍ່
ໄດ້ພົບສັນຕິສຸກໃຫ້ແກ່ຈິດວິນຍານຂອງພໍ່.
9 ແລະ ບັດນີ້, ລູກຂອງພໍ່, ພໍ່ເລົ່າເລື່ອງ
ເຫລົ່ານີ້ໃຫ້ລູກຟັງ ເພື່ອລູກຈະໄດ້ຮຽນຮູ້
ປັນຍາ, ເພື່ອລູກຈະໄດ້ຮຽນຮູ້ຈາກພໍ່ວ່າ
[ກ]ບໍ່ມີທາງອື່ນ ຫລື ວິທີອື່ນໃດທີ່ມະນຸດຈະ
ລອດໄດ້, ມີແຕ່ໃນ ແລະ ໂດຍທາງພຣະ
ຄຣິດເທົ່ານັ້ນ. ຈົ່ງເບິ່ງ, ພຣະອົງເປັນຊີວິດ
ແລະ [ຂ]ຄວາມສະຫວ່າງຂອງໂລກ. ຈົ່ງເບິ່ງ,
ພຣະອົງເປັນພຣະຄຳແຫ່ງຄວາມຈິງ ແລະ
ຄວາມຊອບທຳ.
10 ແລະ ບັດນີ້, ເມື່ອລູກໄດ້ສິດສອນ
ພຣະຄຳຄືກັນກັບພໍ່, ພໍ່ກໍຢາກໃຫ້ລູກສິດ
ສອນຕໍ່ໄປ; ແລະ ພໍ່ຢາກໃຫ້ລູກພາກພຽນ
ແລະ ຮູ້ຈັກຫ້າມຕົນເອງໃນທຸກສິ່ງທຸກຢ່າງ.
11 ຈົ່ງເບິ່ງວ່າ ລູກຈະບໍ່ລະເມີເພີ້ຝັນ
ດ້ວຍຄວາມທະນົງຕົວ; ແທ້ຈິງແລ້ວ, ຈົ່ງ
ເບິ່ງວ່າລູກຈະບໍ່ [ກ]ອວດອ້າງໃນປັນຍາຂອງ
ຕົນ, ຫລື ພະລັງອັນມະຫາສານຂອງລູກ
ເອງ.
12 ຈົ່ງໃຊ້ຄວາມກ້າຫານ, ແຕ່ບໍ່ແມ່ນ
ຄວາມອວດເກັ່ງ; ແລະ ຈົ່ງເບິ່ງອີກວ່າ ລູກ
ຕ້ອງຄວບຄຸມກິເລດຕັນຫາທັງໝົດຂອງ
ລູກ, ເພື່ອລູກຈະເຕັມໄປດ້ວຍຄວາມຮັກ;
ຈົ່ງເບິ່ງວ່າລູກລະເວັ້ນຈາກຄວາມຂີ້ຄ້ານ
ມັກງ່າຍຂອງລູກ.
13 ຢ່າໄດ້ອະທິຖານເໝືອນດັ່ງຊາວ
ໂຊຣຳ, ເພາະລູກເຫັນແລ້ວວ່າ ພວກເຂົາ
ອະທິຖານເພື່ອຢາກໃຫ້ຄົນອື່ນໄດ້ຍິນ,
ແລະ ໄດ້ຮັບການສັນລະເສີນ ເພາະປັນຍາ
ຂອງພວກເຂົາເອງ.
14 ຢ່າໄດ້ເວົ້າວ່າ: ໂອ້ ພຣະອົງເຈົ້າ, ຂ້າ
ນ້ອຍຂອບພຣະໄທພຣະອົງທີ່ພວກຂ້າ
ນ້ອຍ [ກ]ດີເດັ່ນກວ່າພີ່ນ້ອງຂອງພວກຂ້າ
ນ້ອຍ; ແຕ່ຄວນຈະເວົ້າວ່າ: ໂອ້ ພຣະຜູ້
ເປັນເຈົ້າ, ຂໍຈົ່ງໃຫ້ອະໄພຄວາມ [ຂ]ບໍ່ມີຄ່າ
ຄວນຂອງຂ້ານ້ອຍດ້ວຍເຖີດ, ແລະ ຂໍ
ຈົ່ງລະນຶກເຖິງພີ່ນ້ອງຂອງຂ້ານ້ອຍດ້ວຍ
ຄວາມເມດຕາປານີດ້ວຍເຖີດ—ແທ້
ຈິງແລ້ວ, ລູກຈົ່ງຍອມຮັບຄວາມບໍ່ມີຄ່າ
ຄວນຂອງລູກຕໍ່ພຣະພັກຂອງພຣະເຈົ້າ
ຕະຫລອດເວລາ.
15 ແລະ ຂໍພຣະຜູ້ເປັນເຈົ້າຈົ່ງໃຫ້ພອນ
ແກ່ຈິດວິນຍານຂອງລູກ, ແລະ ຮັບເອົາລູກ
ເຂົ້າໄປໃນອານາຈັກຂອງພຣະອົງໃນວັນ
ສຸດທ້າຍ, ເພື່ອນັ່ງລົງໃນສັນຕິສຸກ. ບັດນີ້
ຈົ່ງໄປເຖີດ, ລູກຂອງພໍ່, ແລະ ຈົ່ງສິດສອນ
ພຣະຄຳແກ່ຜູ້ຄົນພວກນີ້. ຈົ່ງມີຄວາມເອົາ
ໃຈໃສ່. ລາກ່ອນ, ລູກຂອງພໍ່.

---

ຄຳສັ່ງຂອງແອວມາໃຫ້ແກ່ໂຄຣິອານທັນ
ລູກຊາຍຂອງເພິ່ນ.

*ມີຢູ່ໃນບົດທີ 39 ຈົນເຖິງບົດທີ 42.*

---

8 *ກ* ຄມພ ປົດບາບ, ການປົດບາບ.
9 *ກ* ຮລມ 5:9.
*ຂ* ມຊຢ 16:9.
11 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
14 *ກ* ແອວ 31:16.
*ຂ* ລກ 18:10–14.

## ບົດທີ 39

*ບາບທາງການຮ່ວມເພດເປັນສິ່ງທີ່ໜ້າກຽດ
ຊັງ—ບາບຂອງ ໂຄ ຣິອານທັນ ໄດ້ກີດກັນ
ຊາວ ໂຊຣຳ ຈາກການ ໄດ້ຮັບພຣະ ຄຳ—
ການໄຖ່ຂອງພຣະຄຣິດມີຜົນສະທ້ອນຄືນ
ຫລັງເພື່ອໄຖ່ຜູ້ຄົນທີ່ຊອບທຳຜູ້ໄດ້ເສຍຊີ
ວິດໄປກ່ອນ. ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ລູກຂອງພໍ່, ພໍ່ມີບາງສິ່ງ
ທີ່ຈະເວົ້າກັບລູກຫລາຍກວ່າທີ່ພໍ່ໄດ້ເວົ້າ
ໄປແລ້ວກັບອ້າຍຂອງລູກ; ເພາະຈົ່ງເບິ່ງ,
ລູກບໍ່ໄດ້ສັງເກດຄວາມແນ່ນອນຂອງອ້າຍ
ຂອງລູກບໍ, ຄວາມຊື່ສັດຂອງລາວ, ແລະ
ຄວາມພາກພຽນຂອງລາວໃນການຮັກສາ
ພຣະບັນຍັດຂອງພຣະເຈົ້າ? ຈົ່ງເບິ່ງ, ລາວ
ບໍ່ໄດ້ເປັນຕົວຢ່າງທີ່ດີໃຫ້ແກ່ລູກບໍ?
2 ເພາະວ່າລູກບໍ່ໄດ້ເອົາໃຈໃສ່ຕໍ່ຄຳ
ເວົ້າຂອງພໍ່ຫລາຍຄືກັນກັບອ້າຍຂອງລູກຢູ່
ໃນບັນດາ [ກ]ຊາວໂຊຣຳ. ບັດນີ້, ນີ້ຄືເລື່ອງ
ທີ່ພໍ່ບໍ່ພໍໃຈກັບລູກ; ລູກໄດ້ອວດອ້າງກຳລັງ
ແລະ ປັນຍາຂອງລູກເອງ.
3 ແລະ ນີ້ຍັງບໍ່ໝົດ, ລູກຂອງພໍ່. ລູກໄດ້
ເຮັດສິ່ງຊຶ່ງເປັນການໂສກເສົ້າແກ່ພໍ່ຫລາຍ;
ເພາະລູກໄດ້ປະຖິ້ມການປະຕິບັດສາດສະ
ໜາກິດ, ແລະ ໄດ້ໄປຫາແຜ່ນດິນໄຊຣັນ ຊຶ່ງ
ຢູ່ລະຫວ່າງຊາຍແດນຂອງຊາວເລມັນ ເພື່ອ
ຕິດຕາມອິດສະເບນ [ກ]ຍິງໂສເພນີຄົນນັ້ນ.
4 ແທ້ຈິງແລ້ວ, ນາງໄດ້ [ກ]ລັກເອົາໃຈຂອງ
ຫລາຍຄົນໄປ; ແຕ່ນີ້ບໍ່ແມ່ນຂໍ້ແກ້ຕົວສຳລັບ
ລູກ, ລູກຂອງພໍ່. ລູກຄວນເອົາໃຈໃສ່ໃນ
ການປະຕິບັດສາດສະໜາກິດ ຊຶ່ງເປັນສິ່ງ
ທີ່ລູກໄດ້ຮັບມອບໝາຍ.
5 ລູກບໍ່ຮູ້ບໍ, ລູກຂອງພໍ່, ວ່າ [ກ]ສິ່ງເຫລົ່າ
ນີ້ເປັນໜ້າກຽດຊັງໃນສາຍພຣະເນດຂອງ
ພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ໜ້າກຽດ
ຊັງທີ່ສຸດເໜືອກວ່າບາບທັງປວງນອກຈາກ
ການເຮັດໃຫ້ຜູ້ບໍລິສຸດຕ້ອງເສຍຊີວິດ ຫລື
ການປະຕິເສດພຣະວິນຍານບໍລິສຸດ?
6 ເພາະຈົ່ງເບິ່ງ, ຖ້າຫາກລູກ [ກ]ປະຕິເສດ
ພຣະວິນຍານບໍລິສຸດ, ຊຶ່ງຄັ້ງໜຶ່ງສະຖິດຢູ່
ໃນລູກ, ແລະ ລູກຮູ້ວ່າຕົນປະຕິເສດ, ຈົ່ງ
ເບິ່ງ, ນີ້ເປັນບາບ [ຂ]ທີ່ອະໄພໃຫ້ບໍ່ໄດ້ເລີຍ;
ແທ້ຈິງແລ້ວ, ແລະ ຜູ້ໃດກໍຕາມທີ່ເປັນຄາດ
ຕະກອນຕໍ່ຄວາມສະຫວ່າງ ແລະ ຮູ້ເລື່ອງ
ພຣະເຈົ້າ, ມັນບໍ່ແມ່ນຂອງງ່າຍສຳລັບພວກ
ເຂົາທີ່ຈະໄດ້ຮັບ [ຄ]ການໃຫ້ອະໄພ; ແທ້ຈິງ
ແລ້ວ, ພໍ່ເວົ້າກັບລູກ, ລູກຂອງພໍ່, ວ່າມັນບໍ່
ງ່າຍສຳລັບພວກເຂົາທີ່ຈະໄດ້ຮັບການໃຫ້
ອະໄພ.
7 ແລະ ບັດນີ້, ລູກຂອງພໍ່, ພໍ່ປາດຖະ
ໜາຕໍ່ພຣະເຈົ້າວ່າ ລູກຈະບໍ່ມີ [ກ]ຄວາມຜິດ
ອັນໃຫຍ່ຫລວງເຊັ່ນນັ້ນ. ພໍ່ບໍ່ຢາກເວົ້າເຖິງ
ຄວາມຜິດຂອງລູກ, ອັນຈະທໍລະມານຈິດ
ວິນຍານຂອງລູກ, ຖ້າຫາກບໍ່ແມ່ນເພື່ອ
ຄວາມດີຂອງລູກ.
8 ແຕ່ຈົ່ງເບິ່ງ, ລູກເຊື່ອງຄວາມຜິດຂອງ
ລູກໃຫ້ພົ້ນຈາກພຣະເຈົ້າບໍ່ໄດ້; ແລະ ຖ້າ
ຫາກລູກບໍ່ກັບໃຈ ມັນຈະຢືນເປັນປະຈັກ
ພະຍານກ່າວໂທດລູກໃນວັນສຸດທ້າຍ.
9 ບັດນີ້ລູກຂອງພໍ່, ພໍ່ຢາກໃຫ້ລູກກັບໃຈ
ແລະ ປະຖິ້ມບາບຂອງລູກ, ແລະ ບໍ່ຫລົງ
ໄຫລ ແລະ [ກ]ໄຝ່ຝັນຢູ່ກັບສິ່ງທີ່ເຫັນໄດ້, ແຕ່

**39** 2 *ກ* ແອວ 38:3.
3 *ກ* ຄມພ ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ.
4 *ກ* ສພສ 7:6–27.
5 *ກ* ຄມພ ການຂາດສິນທຳທາງເພດ.
6 *ກ* ຄພ 76:35–36.
*ຂ* ຄມພ ບາບທີ່ອະໄພໃຫ້ບໍ່ໄດ້.
*ຄ* ຄພ 64:10.
ຄມພ ອະໄພ, ໃຫ້ອະໄພ.
7 *ກ* ຄມພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
9 *ກ* ຄມພ ການມະລົນ.

ຈົ່ງ [ຂ]ຫ້າມຕົນເອງຈາກສິ່ງທັງໝົດນີ້; ເພາະ
ຖ້າຫາກລູກບໍ່ເຮັດດັ່ງນີ້ ລູກກໍບໍ່ມີທາງທີ່ຈະ
ໄດ້ຮັບອານາຈັກຂອງພຣະເຈົ້າເປັນມູນມໍ
ລະດົກໄດ້ເລີຍ. ໂອ້, ຈົ່ງຈຳໄວ້, ແລະ ຈົ່ງ
ຖືເປັນໜ້າທີ່, ແລະ ຫ້າມຕົນເອງຈາກສິ່ງ
ເຫລົ່ານີ້.
10 ແລະ ພໍ່ສັ່ງລູກໃຫ້ຖືເປັນໜ້າທີ່ ທີ່ຈະ
ປຶກສາກັບພວກອ້າຍໃນການປະຕິບັດຂອງ
ລູກ; ເພາະຈົ່ງເບິ່ງ, ລູກຍັງໜຸ່ມຢູ່, ແລະ ລູກ
ຍັງຕ້ອງໃຫ້ພວກອ້າຍບຳລຸງລ້ຽງ, ແລະ ຈົ່ງ
ເອົາໃຈໃສ່ຕໍ່ຄຳແນະນຳຂອງພວກເຂົາ.
11 ຢ່າຍອມໃຫ້ຕົນເອງຖືກຊັກນຳໄປ
ໂດຍສິ່ງທີ່ບໍ່ມີປະໂຫຍດ ຫລື ໂງ່ຈ້າເລີຍ;
ຢ່າຍອມໃຫ້ມານຊັກນຳໃຈຂອງລູກໃຫ້ຕິດ
ຕາມພວກຍິງໂສເພນີທີ່ຊົ່ວຮ້າຍເຫລົ່ານັ້ນ
ອີກ. ຈົ່ງເບິ່ງ, ໂອ້ ລູກຂອງພໍ່, ລູກໄດ້ນຳ
ເອົາຄວາມຊົ່ວຮ້າຍອັນໃຫຍ່ຫລວງພຽງໃດ
ມາໃຫ້ [ກ]ຊາວໂຊຣຳ; ເພາະວ່າເມື່ອພວກ
ເຂົາເຫັນ [ຂ]ການປະພຶດຂອງລູກ ພວກເຂົາ
ບໍ່ຍອມເຊື່ອໃນຄຳເວົ້າຂອງພໍ່ເລີຍ.
12 ແລະ ບັດນີ້ພຣະວິນຍານຂອງພຣະຜູ້
ເປັນເຈົ້າໄດ້ກ່າວກັບພໍ່ວ່າ: ຈົ່ງ [ກ]ສິດສອນ
ພວກລູກຂອງເຈົ້າໃຫ້ສ້າງຄວາມດີ, ເພື່ອບໍ່
ໃຫ້ພວກເຂົາຊັກນຳໃຈຂອງຫລາຍຄົນໄປ
ສູ່ຄວາມພິນາດ; ສະນັ້ນພໍ່ສັ່ງລູກ, ລູກຂອງ
ພໍ່, ດ້ວຍຄວາມເກງກົວພຣະເຈົ້າ, ໃຫ້ລູກ
ລະເວັ້ນຈາກຄວາມຊົ່ວຮ້າຍຂອງລູກ;
13 ໃຫ້ລູກຫັນໜ້າໄປຫາພຣະຜູ້ເປັນເຈົ້າ
ດ້ວຍສຸດຄວາມນຶກຄິດ, ຄວາມສາມາດ,
ແລະ ກຳລັງ; ເພື່ອບໍ່ໃຫ້ລູກຊັກນຳໃຈຂອງ
ຜູ້ໃດໃຫ້ເຮັດຄວາມຊົ່ວ; ແຕ່ແທ້ຈິງແລ້ວ
ຈົ່ງກັບໄປຫາພວກເຂົາ, ແລະ [ກ]ຍອມຮັບ
ຄວາມຜິດຂອງລູກ ແລະ ຄວາມຜິດນັ້ນ ຊຶ່ງ
ລູກໄດ້ກະທຳລົງໄປ.
14 ຢ່າ [ກ]ຊອກຫາຂອງມີຄ່າ ຫລື ສິ່ງທີ່ບໍ່ມີ
ປະໂຫຍດຂອງໂລກ; ເພາະຈົ່ງເບິ່ງ, ລູກຈະ
ເອົາມັນໄປກັບລູກບໍ່ໄດ້.
15 ແລະ ບັດນີ້, ລູກຂອງພໍ່, ພໍ່ຢາກເວົ້າ
ສິ່ງໜຶ່ງກັບລູກກ່ຽວກັບການສະເດັດມາ
ຂອງພຣະຄຣິດ. ຈົ່ງເບິ່ງ, ພໍ່ເວົ້າກັບລູກວ່າ,
ພຣະອົງຈະສະເດັດມາຢ່າງແນ່ນອນເພື່ອ
ເອົາບາບຂອງໂລກໄປ; ແທ້ຈິງແລ້ວ, ພຣະ
ອົງຈະສະເດັດມາເພື່ອປະກາດຂ່າວອັນ
ໜ້າຊື່ນຊົມແຫ່ງຄວາມລອດໃຫ້ແກ່ຜູ້ຄົນ
ຂອງພຣະອົງ.
16 ແລະ ບັດນີ້ລູກຂອງພໍ່, ນີ້ຄືການປະຕິ
ບັດສາດສະໜາກິດ ຊຶ່ງເອີ້ນລູກມາ, ເພື່ອ
ປະກາດຂ່າວອັນໜ້າຊື່ນຊົມເຫລົ່ານີ້ໃຫ້ແກ່
ຜູ້ຄົນພວກນີ້, ເພື່ອຕຽມຈິດໃຈຂອງເຂົາ;
ຫລື ແທ້ຈິງແລ້ວ ຄວາມລອດນັ້ນຈະມາຫາ
ພວກເຂົາ, ເພື່ອພວກເຂົາຈະໄດ້ຕຽມຈິດ
ໃຈຂອງ [ກ]ລູກຫລານຂອງພວກເຂົາໃຫ້ໄດ້
ຍິນພຣະຄຳໃນເວລາຂອງການສະເດັດມາ
ຂອງພຣະອົງ.
17 ແລະ ບັດນີ້ພໍ່ຈະເຮັດໃຫ້ຈິດໃຈຂອງ
ລູກສະບາຍຂຶ້ນກ່ຽວກັບເລື່ອງນີ້. ຈົ່ງເບິ່ງ,
ລູກແປກໃຈຢູ່ວ່າເປັນດ້ວຍເຫດໃດສິ່ງ
ເຫລົ່ານີ້ຈຶ່ງເປັນທີ່ຮູ້ກັນມາກ່ອນເປັນເວລາ
ດົນນານເຖິງພຽງນີ້. ຈົ່ງເບິ່ງ, ພໍ່ກ່າວກັບລູກ
ວ່າຈິດວິນຍານໃນເວລານີ້ບໍ່ແມ່ນບໍທີ່ມີຄ່າ
ຕໍ່ພຣະເຈົ້າດັ່ງຈິດວິນຍານໃນເວລາຂອງ
ການສະເດັດມາຂອງພຣະອົງ?

9 *ຂ* 3 ນຟ 12:30.
11 *ກ* ແອວ 35:2–14.
*ຂ* ຣມ 2:21–23; 14:13; ແອວ 4:11.
12 *ກ* ຄນພ ສອນ, ຜູ້ສອນ, ຄູສອນ; ພຣະບັນຍັດຂອງພຣະເຈົ້າ.
13 *ກ* ມຊຍ 27:34–35.
14 *ກ* ມທ 6:25–34; ຢຄ 2:18–19; ຄພ 6:6–7; 68:31–32.
16 *ກ* ຄນພ ຄອບຄົວ—ໜ້າທີ່ຮັບຜິດຊອບຂອງພໍ່ແມ່.

18 ມັນຈຳເປັນບໍ່ແມ່ນບໍທີ່ແຜນແຫ່ງການ
ໄຖ່ຈະເປັນທີ່ຮູ້ຈັກ ແກ່ຜູ້ຄົນພວກນີ້ເຊັ່ນ
ດຽວກັບ ເປັນທີ່ຮູ້ຈັກແກ່ລູກຫລານຂອງ
ພວກເຂົາ?
19 ມັນງ່າຍບໍ່ແມ່ນບໍທີ່ພຣະຜູ້ເປັນເຈົ້າ
ຈະສົ່ງທູດຂອງພຣະອົງມາປະກາດຂ່າວ
ອັນໜ້າຊື່ນຊົມເຫລົ່ານີ້ແກ່ພວກເຮົາໃນ
ເວລານີ້ດັ່ງແກ່ລູກຫລານຂອງພວກເຮົາ,
ຫລື ດັ່ງພາຍຫລັງເວລາແຫ່ງການສະເດັດ
ມາຂອງພຣະອົງ?

## ບົດທີ 40

*ພຣະຄຣິດນຳເອົາການຟື້ນຄືນຊີວິດມາໃຫ້ມະນຸດທຸກຄົນ—ຄົນຕາຍທີ່ຊອບທຳໄປຫາທີ່ສຸຂະເສີມ ແລະ ຄົນຊົ່ວໄປຫາຄວາມມືດພາຍນອກເພື່ອລໍຖ້າມື້ແຫ່ງການຟື້ນຄືນຊີວິດຂອງພວກເຂົາ—ທຸກສ່ວນຈະຖືກປະກອບເຂົ້າກັນໃນລັກສະນະອັນສົມບູນຂອງມັນໃນວັນແຫ່ງການຟື້ນຄືນຊີວິດ. ປະມານ 74 ປີ ກ່ອນ ຄ.ສ.*

1 ບັດນີ້ລູກຂອງພໍ່, ນີ້ຄືເລື່ອງທີ່ພໍ່ຈະເວົ້າ
ເພີ່ມເຕີມກັບລູກອີກ; ເພາະພໍ່ເຫັນວ່າຈິດ
ໃຈຂອງລູກກັງວົນກ່ຽວກັບເລື່ອງການຟື້ນ
ຄືນຊີວິດຂອງຄົນຕາຍ.
2 ຈົ່ງເບິ່ງ, ພໍ່ເວົ້າກັບລູກວ່າ, ບໍ່ມີການຟື້ນ
ຄືນຊີວິດ—ຫລື, ພໍ່ຈະເວົ້າອີກຄຳໜຶ່ງວ່າ,
ຄວາມເປັນມະຕະບໍ່ໄດ້ສວມໃສ່ [ກ]ຄວາມ
ເປັນອະມະຕະ, ຄວາມເນົ່າເປື່ອຍນີ້ບໍ່ໄດ້
[ຂ]ສວມໃສ່ຄວາມບໍ່ເນົ່າເປື່ອຍ—[ຄ]ຈົນຮອດ
ພາຍຫລັງການສະເດັດມາຂອງພຣະຄຣິດ.
3 ຈົ່ງເບິ່ງ, ພຣະອົງໄດ້ນຳ [ກ]ການຟື້ນຄືນ
ຊີວິດມາໃຫ້ຄົນຕາຍ. ແຕ່ຈົ່ງເບິ່ງ, ລູກຂອງ
ພໍ່, ມັນຍັງບໍ່ໄດ້ເກີດການຟື້ນຄືນຊີວິດເທື່ອ.
ບັດນີ້, ພໍ່ໄດ້ເປີດເຜີຍຄວາມລຶກລັບໃຫ້ລູກ
ຟັງກ່ອນ; ປານນັ້ນ, ມັນຍັງມີ [ຂ]ຄວາມລຶກ
ລັບຫລາຍເລື່ອງ ຊຶ່ງຖືກ [ຄ]ເກັບກຳໄວ້, ຊຶ່ງ
ບໍ່ມີຜູ້ໃດຮູ້ຈັກມັນນອກຈາກພຣະເຈົ້າເອງ.
ແຕ່ພໍ່ຈະເລົ່າໃຫ້ລູກຟັງເຖິງເລື່ອງໜຶ່ງ ຊຶ່ງພໍ່
ໄດ້ທູນຖາມພຣະເຈົ້າຢ່າງພາກພຽນເພື່ອພໍ່
ຈະໄດ້ຮູ້—ເພາະມັນກ່ຽວກັບການຟື້ນຄືນຊີ
ວິດ.
4 ຈົ່ງເບິ່ງ, ມີເວລາກຳນົດໄວ້ທີ່ທຸກຄົນຈະ
[ກ]ອອກມາຈາກຄວາມຕາຍ. ບັດນີ້ເມື່ອໃດ
ເວລານີ້ຈະມາເຖິງກໍບໍ່ມີຜູ້ໃດຮູ້; ແຕ່ພຣະ
ເຈົ້າຮູ້ເວລາທີ່ກຳນົດໄວ້.
5 ບັດນີ້, ບໍ່ວ່າມັນຈະມີຄັ້ງດຽວ, ຫລື
ຄັ້ງ [ກ]ທີສອງ, ຫລື ຄັ້ງທີສາມ, ທີ່ມະນຸດຈະ
ອອກມາຈາກຄວາມຕາຍນັ້ນ, ມັນບໍ່ສຳຄັນ
ເພາະພຣະເຈົ້າ [ຂ]ຮູ້ເລື່ອງທັງໝົດນີ້; ແລະ
ເປັນການພຽງພໍສຳລັບພໍ່ທີ່ພຽງຮູ້ວ່າມັນ
ເປັນເຊັ່ນນັ້ນ—ຄືມີເວລາກຳນົດໄວ້ທີ່ທຸກ
ຄົນຈະລຸກຂຶ້ນຈາກຄວາມຕາຍ.
6 ບັດນີ້ ມັນ ຈຳຕ້ອງມີໄລຍະເວລາ
ລະຫວ່າງການຕາຍກັບເວລາຂອງການຟື້ນ
ຄືນຊີວິດ.
7 ແລະ ບັດນີ້ພໍ່ຢາກຖາມວ່າມັນຈະເກີດ
ອັນໃດຂຶ້ນກັບ [ກ]ຈິດວິນຍານຂອງມະນຸດ
ຕັ້ງແຕ່ເວລາຂອງການຕາຍຈົນເຖິງເວລາ
ທີ່ກຳນົດໄວ້ສຳລັບການຟື້ນຄືນຊີວິດ?
8 ບັດນີ້ບໍ່ວ່າມັນຈະມີຫລາຍກວ່າຄັ້ງດຽວ
ທີ່ກຳນົດໄວ້ເພື່ອໃຫ້ມະນຸດລຸກຂຶ້ນມາຈາກ

---

**40** 2 *ກ* ມຊຢ 16:10–13.
ຄມພ ອະມະຕະ, ຄວາມ
ເປັນອະມະຕະ.
*ຂ* 1 ກຣທ 15:53–54.
*ຄ* 1 ກຣທ 15:20.
3 *ກ* ຄມພ ການຟື້ນຄືນພຣະ
ຊົນ, ການຟື້ນຄືນຊີວິດ.
*ຂ* ຄມພ ຄວາມລຶກລັບ
ຂອງພຣະເຈົ້າ.
*ຄ* ຄພ 25:4; 124:41.
4 *ກ* ຢຮ 5:28–29.
5 *ກ* ມຊຢ 26:24–25;
ຄພ 43:18; 76:85.
*ຂ* ຄມພ ພຣະເຈົ້າ,
ຝ່າຍພຣະເຈົ້າ.
7 *ກ* ແອວ 40:21;
ຄພ 138.
ຄມພ ຈິດວິນຍານ.

ຄວາມຕາຍນັ້ນ ມັນກໍບໍ່ສຳຄັນ; ເພາະທຸກ
ຄົນບໍ່ໄດ້ຕາຍພ້ອມກັນ ແລະ ມັນບໍ່ສຳຄັນ
ເພາະທັງໝົດນີ້ເປັນຄືກັນກັບໜຶ່ງມື້ສຳລັບ
ພຣະເຈົ້າ; ແລະ ເປັນພຽງເວລາທີ່ມະນຸດ
ໃຊ້ນັບກັນເທົ່ານັ້ນ.
9 ສະນັ້ນ, ມັນຈຶ່ງມີເວລາກຳນົດໃຫ້ມະ
ນຸດລຸກ ຂຶ້ນ ຈາກ ຄວາມຕາຍ ແລະ ມີໄລ
ຍະເວລາລະຫວ່າງການຕາຍ ແລະ ການ
ຟື້ນຄືນຊີວິດ. ແລະ ບັດນີ້, ກ່ຽວກັບໄລຍະ
ເວລາຂອງຕອນນີ້ ຈະມີຫຍັງເກີດຂຶ້ນກັບ
ຈິດວິນຍານຂອງມະນຸດເປັນເລື່ອງທີ່ພໍ່ໄດ້
ທູນຖາມມາຢ່າງພາກພຽນຈາກພຣະຜູ້ເປັນ
ເຈົ້າ ເພື່ອຈະໄດ້ຮູ້ຈັກ; ແລະ ນີ້ຄືເລື່ອງທີ່ພໍ່
ຮູ້ມາ.
10 ແລະ ເມື່ອເວລາມາເຖິງ ທຸກຄົນຈະ
ລຸກຂຶ້ນ, ແລ້ວພວກເຂົາຈະຮູ້ວ່າພຣະເຈົ້າຮູ້
[ກ]ເວລາທັງໝົດທີ່ກຳນົດໄວ້ໃຫ້ມະນຸດ.
11 ບັດນີ້, ກ່ຽວກັບສະພາບຂອງຈິດວິນ
ຍານລະຫວ່າງ [ກ]ການຕາຍກັບການຟື້ນ
ຄືນຊີວິດ—ຈົ່ງເບິ່ງ, ທູດໄດ້ເຮັດໃຫ້ເປັນ
ທີ່ຮູ້ຈັກແກ່ພໍ່ວ່າ ວິນຍານຂອງມະນຸດທຸກ
ຄົນນັ້ນ ທັນທີທີ່ອອກຈາກຮ່າງກາຍທີ່ເປັນ
ມະຕະ, ແທ້ຈິງແລ້ວ, ວິນຍານຂອງມະນຸດ
ທຸກຄົນ, ບໍ່ວ່າເຂົາດີ ຫລື ຊົ່ວ, ຍ່ອມຖືກນຳ
ກັບ [ຂ]ບ້ານໄປຫາພຣະເຈົ້າຜູ້ປະທານຊີວິດ
ໃຫ້ແກ່ເຂົາ.
12 ແລະ ເມື່ອນັ້ນ ເຫດການຈະບັງເກີດ
ຂຶ້ນ, ຄືວິນຍານຂອງຜູ້ທີ່ຊອບທຳຈະຖືກຮັບ
ເຂົ້າໃນສະພາບແຫ່ງ [ກ]ຄວາມສຸກ, ຊຶ່ງເອີ້ນ
ວ່າ ທີ່ [ຂ]ສຸຂະເສີມ, ສະພາບຂອງ [ຄ]ການພັກ
ຜ່ອນ, ສະພາບຂອງ [ງ]ສັນຕິສຸກ, ຊຶ່ງບ່ອນ
ນັ້ນພວກເຂົາຈະພັກຜ່ອນຈາກຄວາມຫຍຸ້ງ
ຍາກທັງໝົດຂອງພວກເຂົາ ແລະ ຈາກ
ຄວາມກັງວົນ, ແລະ ຄວາມເສົ້າສະຫລົດ
ໃຈທຸກຢ່າງ.
13 ແລະ ເມື່ອນັ້ນເຫດການຈະບັງເກີດ
ຂຶ້ນ, ຄືວິນຍານຂອງຄົນຊົ່ວ, ແທ້ຈິງແລ້ວ,
ຜູ້ທີ່ຊົ່ວ—ເພາະຈົ່ງເບິ່ງ, ພວກເຂົາບໍ່ມີແມ່ນ
ແຕ່ສ່ວນໜຶ່ງຂອງພຣະວິນຍານຂອງພຣະ
ຜູ້ເປັນເຈົ້າເລີຍ; ເພາະຈົ່ງເບິ່ງ, ພວກເຂົາ
ໄດ້ເລືອກເອົາວຽກງານຊົ່ວແທນວຽກງານ
ດີ; ສະນັ້ນ ວິນຍານຂອງມານໄດ້ເຂົ້າຢູ່ກັບ
ພວກເຂົາ, ແລະ ເຂົ້າເປັນເຈົ້າຂອງບ້ານ
ຂອງພວກເຂົາ—ແລະ ຄົນເຫລົ່ານີ້ຈະຖືກ
ຂັບໄລ່ອອກໄປຫາ [ກ]ຄວາມມືດພາຍນອກ;
ມັນຈະມີ [ຂ]ການຮ້ອງໄຫ້, ແລະ ການຄວນ
ຄາງ, ແລະ ການຂົບແຂ້ວຄ້ຽວຟັນ, ແລະ
ນີ້ເພາະຄວາມຊົ່ວຮ້າຍຂອງຕົນເອງ, ໂດຍ
ທີ່ພວກເຂົາຖືກນຳໄປເປັນຊະເລີຍດ້ວຍ
ຄວາມປະສົງຂອງມານ.
14 ບັດນີ້, ນີ້ຄືສະພາບຂອງຈິດວິນຍານ
ຂອງ [ກ]ຄົນຊົ່ວ, ແທ້ຈິງແລ້ວ, ໃນຄວາມ
ມືດ, ແລະ ໃນສະພາບອັນ [ຂ]ເປັນຕາຢ້ານ
ຫລາຍ, ເຝົ້າຄອຍຄວາມເຄືອງແຄ້ນເໝືອນ
ກັບໄຟອັນໜ້າເກງຂາມ ແລະ ໜ້າຢ້ານ
ກົວຂອງພຣະພິໂລດຂອງພຣະເຈົ້າທີ່ມີກັບ
ພວກເຂົາ; ເຂົາຈະຄົງຢູ່ໃນ [ຄ]ສະພາບນີ້ດັ່ງ
ນັ້ນ, ເຊັ່ນດຽວກັບຄົນຊອບທຳຢູ່ໃນທີ່ສຸຂະ
ເສີມຈົນເຖິງເວລາແຫ່ງການຟື້ນຄືນຊີວິດ
ຂອງພວກເຂົາ.

10 *ກ* ກຈກ 17:26.
11 *ກ* ລກ 16:22–26;
1 ປຕ 3:18–19; 4:6;
ຄພ 76:71–74; 138.
*ຂ* ປຍຈ 12:7;
2 ນຟ 9:38.
12 *ກ* ຄມພ ຊື່ນຊົມ,
ຄວາມຊື່ນຊົມ.
*ຂ* ຄມພ ທີ່ສຸຂະເສີມ.
*ຄ* ຄມພ ພັກຜ່ອນ.
*ງ* ຄພ 45:46.
ຄມພ ສະຫງົບ,
ຄວາມສະຫງົບ.
13 *ກ* ຄມພ ນະລົກ.
*ຂ* ມທ 8:12;
ມຊຢ 16:2.
14 *ກ* ຄພ 138:20.
*ຂ* ຢຄ 6:13;
ມຊ 7:1.
*ຄ* ແອວ 34:34.

15 ບັດນີ້, ມີບາງຄົນທີ່ເຂົ້າໃຈວ່າ ສະພາບ ແຫ່ງຄວາມສຸກ ແລະ ສະພາບ ແຫ່ງຄວາມ ທຸກທໍລະ ມານຂອງຈິດວິນຍານນີ້ ກ່ອນການຟື້ນຄືນຊີວິດເປັນການຟື້ນຄືນຊີວິດຄັ້ງທຳອິດ. ແທ້ຈິງແລ້ວ, ພໍ່ຍອມຮັບວ່າ ມັນອາດຈະເປັນຄຳເວົ້າທີ່ໃຊ້ເອີ້ນກັນວ່າ ເປັນການຟື້ນຄືນຊີວິດ, ເປັນການຍົກວິນຍານ ຫລື ຈິດວິນຍານຂຶ້ນ ແລະ ເປັນການສົ່ງພວກເຂົາໄປຫາຄວາມສຸກ ຫລື ຄວາມທຸກທໍລະມານ, ຕາມຄຳທີ່ໄດ້ເວົ້າໄວ້.

16 ແລະ ຈົ່ງເບິ່ງ, ມັນມີເວົ້າໄວ້ອີກວ່າ, ກການຟື້ນຄືນຊີວິດ ຂຄັ້ງທຳອິດນີ້, ເປັນການຟື້ນຄືນຊີວິດຂອງທຸກຄົນທີ່ເຄີຍມີຊີວິດມາແລ້ວ, ຫລື ກຳລັງມີຊີວິດຢູ່, ຫລື ທີ່ຈະມີຊີວິດ, ລົງມາເຖິງການຟື້ນຄືນພຣະຊົນຂອງພຣະຄຣິດຈາກຄວາມຕາຍ.

17 ບັດນີ້, ພວກເຮົາບໍ່ຄິດວ່າການຟື້ນຄືນຊີວິດຄັ້ງທຳອິດນີ້, ຊຶ່ງເວົ້າເຖິງຕາມທີ່ວ່າມານີ້ຈະເປັນການຟື້ນຄືນຊີວິດຂອງຈິດວິນຍານ ແລະ ກການສົ່ງພວກເຂົາໄປຫາຄວາມສຸກ ຫລື ໄປຫາຄວາມທຸກທໍລະມານ. ລູກຈະບໍ່ຄິດວ່າມັນໝາຍຄວາມວ່າແນວນີ້.

18 ຈົ່ງເບິ່ງ, ພໍ່ເວົ້າກັບລູກວ່າ, ບໍ່ເລີຍ; ແຕ່ມັນໝາຍເຖິງການກັບມາຮ່ວມເຂົ້າກັນຂອງຈິດວິນຍານ ແລະ ຮ່າງກາຍ, ຂອງຄົນເຫລົ່ານີ້ນັບແຕ່ວັນເວລາຂອງອາດາມລົງມາຈົນເຖິງ ກການຟື້ນຄືນພຣະຊົນຂອງພຣະຄຣິດ.

19 ບັດນີ້, ບໍ່ວ່າຈິດວິນຍານ ແລະ ຮ່າງກາຍ ຂອງຄົນຊົ່ວ ແລະ ຄົນຊອບທຳ ຈະຮ່ວມເຂົ້າກັນໃນເວລາດຽວກັນ, ພໍ່ຈະບໍ່ເວົ້າເຖິງ; ຂໍໃຫ້ມັນພຽງພໍເທົ່ານີ້, ພໍ່ມີແຕ່ຈະເວົ້າວ່າພວກເຂົາທຸກຄົນຈະອອກມາ ຫລື ອີກຄຳໜຶ່ງ, ການຟື້ນຄືນຊີວິດຂອງພວກເຂົາຈະເກີດຂຶ້ນ ກກ່ອນການຟື້ນຄືນຊີວິດຂອງຄົນທີ່ຕາຍພາຍຫລັງການຟື້ນຄືນພຣະຊົນຂອງພຣະຄຣິດ.

20 ບັດນີ້, ລູກຂອງພໍ່, ພໍ່ບໍ່ໄດ້ເວົ້າວ່າການຟື້ນຄືນຊີວິດຂອງພວກເຂົາມາພ້ອມກັບການຟື້ນຄືນພຣະຊົນຂອງພຣະຄຣິດ; ແຕ່ຈົ່ງເບິ່ງ, ພໍ່ໃຫ້ຄວາມເຫັນວ່າ ຈິດວິນຍານ ແລະ ຮ່າງກາຍຂອງຄົນທີ່ຊອບທຳຈະກັບມາຮ່ວມກັນໃນເວລາດຽວກັບການຟື້ນຄືນພຣະຊົນຂອງພຣະຄຣິດ, ແລະ ກການສະເດັດຂຶ້ນສະຫວັນຂອງພຣະອົງ.

21 ແຕ່ບໍ່ວ່າຈະເປັນໄປໃນເວລາຂອງການຟື້ນຄືນພຣະຊົນຂອງພຣະອົງ ຫລື ພາຍຫລັງ, ພໍ່ຈະບໍ່ກ່າວເຖິງ; ແຕ່ຂໍກ່າວພຽງເທົ່ານີ້, ວ່າມັນມີໄລຍະ ກເວລາລະຫວ່າງການຕາຍກັບການຟື້ນຄືນຊີວິດຂອງຮ່າງກາຍ, ແລະ ມີສະພາບຂອງຈິດວິນຍານຢູ່ໃນ ຂຄວາມສຸກ ຫລື ຢູ່ໃນ ຄຄວາມທຸກທໍລະມານ ຈົນເຖິງເວລາທີ່ພຣະເຈົ້າກຳນົດວ່າຄົນຕາຍຈະອອກມາ, ແລະ ທັງຈິດວິນຍານ ແລະ ຮ່າງກາຍຈະເຂົ້າຮ່ວມກັນ, ແລະ ຖືກ ງນຳມາຢືນຢູ່ຕໍ່ພຣະພັກຂອງພຣະເຈົ້າ, ແລະ ຈະຖືກພິພາກສາຕາມວຽກງານຂອງພວກເຂົາ.

22 ແທ້ຈິງແລ້ວ, ສິ່ງນີ້ຈະນຳສິ່ງເຫລົ່ານັ້ນຄືນມາຊຶ່ງກ່າວໄວ້ໂດຍປາກຂອງສາດສະດາ.

23 ກຈິດ ວິນ ຍານ ຈະ ຂກັບ ຄືນ ເຂົ້າ ຫາ

16 ກ ຢຄ 4:11; ມຊຢ 15:21–23.
ຂ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
17 ກ ຄພ 76:17, 32, 50–51.
18 ກ ມທ 27:52–53.
19 ກ ມຊຢ 15:26.
20 ກ ຄມພ ການສະເດັດຂຶ້ນສະຫວັນ.
21 ກ ລກ 23:39–43.
ຂ ຄມພ ທີ່ສຸຂະເສີມ.
ຄ ຄມພ ນະລົກ.
ງ ແອວ 42:23.
23 ກ ອສ ວິນຍານ. ຄພ 88:15–17. ຄມພ ຈິດວິນຍານ.
ຂ 2 ນຟ 9:12–13; ແອວ 11:40–45.

[ຄ]ຮ່າງກາຍ, ແລະ ຮ່າງກາຍເຂົ້າຫາຈິດວິນ
ຍານ; ແທ້ຈິງແລ້ວ, ທຸກແຂນຂາ ແລະ ຂໍ້ຕໍ່
ຈະກັບຄືນເຂົ້າຫາຮ່າງກາຍຂອງມັນ; ແທ້
ຈິງແລ້ວ, ເຖິງແມ່ນຜົມເສັ້ນໜຶ່ງໃນຫົວກໍຈະ
ບໍ່ເສຍໄປ; ແຕ່ທຸກຢ່າງຈະຖືກນຳກັບຄືນຫາ
ໂຄງຮ່າງອັນຖືກຕ້ອງ ແລະ ສົມບູນຂອງມັນ.
24 ແລະ ບັດນີ້, ລູກຂອງພໍ່, ນີ້ຄືການກັບ
ຄືນຊຶ່ງໄດ້ [ກ]ເວົ້າໄວ້ດ້ວຍປາກຂອງສາດສະ
ດາ—
25 ແລະ ເມື່ອນັ້ນຄົນຊອບທຳຈະສ່ອງ
ແສງສະຫວ່າງໃນອານາຈັກຂອງພຣະເຈົ້າ.
26 ແຕ່ຈົ່ງເບິ່ງ, [ກ]ຄວາມຕາຍອັນເປັນ
ຕາຢ້ານຈະມາຫາຄົນຊົ່ວ; ເພາະພວກເຂົາ
ຕາຍໃນເລື່ອງທີ່ກ່ຽວກັບຄວາມຊອບທຳ;
ເພາະພວກເຂົາບໍ່ສະອາດ, ແລະ ຈະບໍ່ມີ
[ຂ]ສິ່ງທີ່ບໍ່ສະອາດຈະສາມາດຮັບເອົາອານາ
ຈັກຂອງພຣະເຈົ້າເປັນມູນມໍລະດົກໄດ້; ແຕ່
ພວກເຂົາຈະຖືກຂັບໄລ່ອອກໄປ, ແລະ ຖືກ
ສົ່ງໄປຮັບສ່ວນທີ່ໄດ້ກະທຳໄວ້, ຫລື ວຽກ
ງານຊົ່ວຂອງພວກເຂົາ; ແລະ ພວກເຂົາຈະ
ດື່ມສິ່ງທີ່ສົກກະປົກຈາກຈອກທີ່ຂົມຂື່ນນັ້ນ.

## ບົດທີ 41

*ໃນການຟື້ນຄືນຊີວິດນີ້ ມະນຸດຈະມາສູ່ສະພາບຂອງຄວາມສຸກ ຫລື ຄວາມທຸກທໍລະມານຕະຫລອດການ—ຄວາມຊົ່ວຮ້າຍບໍ່ເຄີຍເປັນຄວາມສຸກ—ມະນຸດທີ່ເຕັມໄປດ້ວຍການມະລົມຈະດຳເນີນຊີວິດຢູ່ໃນໂລກນີ້ໂດຍປາດສະຈາກພຣະເຈົ້າ—ທຸກໆຄົນຈະໄດ້ຮັບບຸກຄະລິກລັກສະນະ ແລະ ຄຸນສົມບັດທີ່ເຄີຍມີໃນຊີວິດມະຕະຄືນອີກ. ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ລູກຂອງພໍ່, ພໍ່ມີສິ່ງໜຶ່ງ
ທີ່ຈະເວົ້າກ່ຽວກັບການນຳຄືນມາຂອງ
ສິ່ງທີ່ໄດ້ເວົ້າເຖິງ; ເພາະຈົ່ງເບິ່ງ, ບາງຄົນ
ໄດ້ [ກ]ບິດເບືອນຄວາມໝາຍຂອງພຣະຄຳ
ພີ, ແລະ [ຂ]ຫລົງໄປໄກເພາະສິ່ງນີ້. ແລະ ພໍ່
ມອງເຫັນວ່າຈິດໃຈຂອງລູກກັງວົນກ່ຽວ
ກັບເລື່ອງນີ້ນຳອີກ. ແຕ່ຈົ່ງເບິ່ງ, ພໍ່ຈະອະທິ
ບາຍໃຫ້ລູກຟັງ.
2 ພໍ່ເວົ້າກັບເຈົ້າ, ລູກຂອງພໍ່, ວ່າແຜນ
ການນຳກັບຄືນມາຈຳເປັນຕໍ່ຄວາມຍຸດຕິ
ທຳຂອງພຣະເຈົ້າ; ເພາະມັນຈຳເປັນທີ່ຈະ
ນຳທຸກຢ່າງກັບຄືນມາຫາສະພາບອັນຖືກ
ຕ້ອງຂອງມັນ. ຈົ່ງເບິ່ງ, ມັນຈຳເປັນ ແລະ
ທ່ຽງທຳ, ຕາມອຳນາດ ແລະ ຕາມການຟື້ນ
ຄືນພຣະຊົນຂອງພຣະຄຣິດ, ຄືຈິດວິນຍານ
ຂອງມະນຸດຈະຖືກນຳກັບຄືນຫາຮ່າງກາຍ
ຂອງມັນ, ແລະ ຄືທຸກ [ກ]ສ່ວນຂອງຮ່າງກາຍ
ຈະຖືກນຳກັບຄືນຫາຕົວ.
3 ແລະ ມັນຈຳເປັນກັບ [ກ]ຄວາມຍຸດຕິທຳ
ຂອງພຣະເຈົ້າຄື ມະນຸດຈະຖືກ [ຂ]ພິພາກສາ
ຕາມ [ຄ]ວຽກງານຂອງພວກເຂົາ; ແລະ ຖ້າ
ຫາກວຽກງານຂອງພວກເຂົາດີໃນຊີວິດ
ນີ້, ແລະ ຄວາມປາດຖະໜາຂອງໃຈຂອງ
ພວກເຂົາດີ, ວ່າໃນວັນສຸດທ້າຍພວກເຂົາ
ກໍຈະຖືກ [ງ]ນຳກັບຄືນຫາສິ່ງທີ່ດີນັ້ນ.
4 ແລະ ຖ້າຫາກວຽກງານຂອງພວກເຂົາ
ຊົ່ວ ມັນກໍຈະຖືກ [ກ]ນຳກັບຄືນມາຫາເຂົາໃນ
ທາງຄວາມຊົ່ວ. ສະນັ້ນ, ທຸກຢ່າງຈະຖືກນຳ

23 *ຄ* ຄມພ ຮ່າງກາຍ.
24 *ກ* ອຊຢ 26:19.
26 *ກ* 1 ນຟ 15:33; ແອວ 12:16.
*ຂ* ແອວ 11:37.
**41** 1 *ກ* 2 ປຕ 1:20; 3:16; ແອວ 13:20.
*ຂ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
2 *ກ* ແອວ 40:23.
3 *ກ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຂ* ຄມພ ພິພາກສາ, ການພິພາກສາ, ຜູ້ພິພາກສາ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
*ຄ* ຄມພ ວຽກງານ.
*ງ* ຮລມ 14:31.
4 *ກ* ແອວ 42:28.

ກັບ ຄືນ ຫາ ສະພາບ ອັນ ຖືກຕ້ອງ ຂອງ ມັນ,
ທຸກຢ່າງ ຈະ ມາຫາ ໂຄງ ຮ່າງ ໂດຍ ທຳ ມະ
ຊາດຂອງມັນ—[ຂ]ຄວາມເປັນມະຕະຈະຖືກ
ຍົກຂຶ້ນຫາຄວາມເປັນອະມະຕະ, [ຄ]ຄວາມ
ເນົ່າເປື່ອຍຫາຄວາມບໍ່ເນົ່າເປື່ອຍ—ຂຶ້ນຫາ
ຄວາມສຸກອັນ [ງ]ບໍ່ມີບ່ອນສຸດ ເພື່ອຮັບເອົາ
ອານາຈັກຂອງພຣະເຈົ້າເປັນມູນມໍລະດົກ,
ຫລື ຂຶ້ນຫາຄວາມທຸກທໍລະມານອັນບໍ່ມີ
ບ່ອນສຸດ ເພື່ອຮັບເອົາອານາຈັກຂອງມານ
ເປັນມູນມໍລະດົກ, ພວກໜຶ່ງຈະຢູ່ທາງໜຶ່ງ,
ແລະ ອີກພວກໜຶ່ງຈະຢູ່ອີກທາງໜຶ່ງ—
5 ພວກໜຶ່ງຈະຖືກຍົກຂຶ້ນຫາຄວາມສຸກ
ຕາມການສະແຫວງຫາຄວາມສຸກຂອງຕົນ,
ຫລື ຄວາມດີຕາມການສະແຫວງຫາຄວາມ
ດີຂອງຕົນ; ແລະ ອີກພວກໜຶ່ງຫາຄວາມ
ຊົ່ວຕາມການສະແຫວງຫາຄວາມຊົ່ວຂອງ
ຕົນ; ເພາະຖ້າຜູ້ໃດສະແຫວງຫາຄວາມຊົ່ວ
ຕະຫລອດທັງວັນ ຜູ້ນັ້ນກໍຈະໄດ້ຮັບລາງ
ວັນທີ່ເປັນຄວາມຊົ່ວຂອງເຂົາເມື່ອກາງຄືນ
ມາເຖິງ.
6 ແລະ ເປັນດັ່ງນັ້ນກັບອີກພວກໜຶ່ງ. ຖ້າ
ຫາກເຂົາກັບໃຈຈາກບາບຂອງເຂົາ, ແລະ
ສະແຫວງຫາຄວາມຊອບທຳຈົນເຖິງທີ່ສຸດ
ຂອງວັນເວລາຂອງເຂົາ, ແລ້ວເຂົາຈະໄດ້
ຮັບລາງວັນອັນໄປສູ່ຄວາມຊອບທຳ.
7 [ກ]ຄົນເຫລົ່ານີ້ຄືຜູ້ທີ່ຖືກໄຖ່ໂດຍພຣະຜູ້
ເປັນເຈົ້າ; ແທ້ຈິງແລ້ວ, ຄົນເຫລົ່ານີ້ຄືຄົນ
ທີ່ໄດ້ຮັບການນຳອອກມາ, ແລະ ໄດ້ຮັບ
ການປົດປ່ອຍຈາກຄືນແຫ່ງຄວາມມືດອັນ
ບໍ່ມີບ່ອນສຸດ; ແລະ ພວກເຂົາຈຶ່ງຢືນຢູ່ ຫລື
ຕົກໄປດັ່ງນີ້; ເພາະຈົ່ງເບິ່ງ, ພວກເຂົາເປັນ
ຜູ້ພິພາກສາ [ຂ]ຂອງຕົນເອງ, ບໍ່ວ່າຈະກະທຳ
ຄວາມດີ ຫລື ຄວາມຊົ່ວ.
8 ບັດ ນີ້, ຄຳ ສັ່ງ ຂອງ ພຣະ ເຈົ້າ [ກ]ປ່ຽນ
ແປງບໍ່ໄດ້; ສະນັ້ນ, ຈຶ່ງມີທາງຕຽມໄວ້ເພື່ອ
ຜູ້ໃດກໍຕາມທີ່ມີເຈດຕະນາຈະເດີນທາງນັ້ນ
ແລະ ຈະລອດ.
9 ແລະ ບັດນີ້ຈົ່ງເບິ່ງ, ລູກຂອງພໍ່, ຢ່າສ່ຽງ
ເຮັດຄວາມຜິດຕໍ່ພຣະເຈົ້າຂອງລູກຕາມ
ຫລັກຄຳສອນເຫລົ່ານັ້ນ [ກ]ອີກເລີຍ, ຊຶ່ງເຖິງ
ບັດນີ້ລູກກໍສ່ຽງກະທຳບາບມາແລ້ວ.
10 ຢ່າຄິດຂຶ້ນມາເອງ, ເພາະມັນມີເວົ້າ
ໄວ້ກ່ຽວກັບການນຳກັບຄືນ, ວ່າລູກຈະຖືກ
ນຳກັບຄືນຈາກບາບໄປຫາຄວາມສຸກ. ຈົ່ງ
ເບິ່ງ, ພໍ່ເວົ້າກັບລູກວ່າ [ກ]ຄວາມຊົ່ວຮ້າຍບໍ່
ເຄີຍເປັນຄວາມສຸກເລີຍ.
11 ແລະ ບັດນີ້, ລູກຂອງພໍ່, ມະນຸດທັງ
ປວງທີ່ຢູ່ໃນສະພາບ ແຫ່ງ [ກ]ທຳມະຊາດ,
ຫລື ພໍ່ຢາກເວົ້າ, ຢູ່ໃນສະພາບແຫ່ງ [ຂ]ການ
ມະລົນ, ຢູ່ໃນນ້ຳບີແຫ່ງຄວາມຂົມຂື່ນ ແລະ
ໃນພັນທະການແຫ່ງຄວາມຊົ່ວຮ້າຍ; ພວກ
ເຂົາຢູ່ໃນໂລກໂດຍ [ຄ]ບໍ່ມີພຣະເຈົ້າ, ແລະ
ພວກເຂົາໄປໃນທາງກົງກັນຂ້າມກັບທຳມະ
ຊາດຂອງພຣະເຈົ້າ; ສະນັ້ນ, ພວກເຂົາຈຶ່ງ
ຢູ່ໃນສະພາບກົງກັນຂ້າມກັບທຳມະຊາດ
ຂອງຄວາມສຸກ.
12 ແລະ ບັດນີ້ຈົ່ງເບິ່ງ, ຄວາມໝາຍຂອງ
ຄຳວ່າການນຳກັບຄືນມາຄືການນຳເອົາສິ່ງ
ທີ່ຢູ່ໃນສະພາບທຳມະຊາດມາ ແລະ ວາງ
ໄວ້ໃນສະພາບທີ່ບໍ່ເປັນທຳມະຊາດ, ຫລື

4 *ຂ* 2 ນຟ 9:12–13; ຄພ 138:17. ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຄ* 1 ກຣທ 15:51–55.
*ງ* ຄມພ ຊີວິດນິລັນດອນ.
7 *ກ* ຄພ 76:50–70.
*ຂ* 2 ນຟ 2:26; ແອວ 42:27; ຣລມ 14:30. ຄມພ ອຳເພີໃຈ.
8 *ກ* ຄພ 1:38.
9 *ກ* ຄພ 42:23–28.
10 *ກ* ພສສ 32:10; ອຊຢ 57:20–21; ຮລມ 13:38.
11 *ກ* ມຊຢ 3:19. ຄມພ ມະນຸດທີ່ມີຈິດໃຈທຳມະດາ.
*ຂ* ຄມພ ການມະລົນ.
*ຄ* ອຟຊ 2:12.

ວາງໄວ້ໃນສະພາບກົງກັນຂ້າມກັບທຳມະ
ຊາດຂອງມັນບໍ?
13 ໂອ້, ລູກຂອງພໍ່, ມັນບໍ່ໄດ້ເປັນເຊັ່ນ
ນັ້ນ; ແຕ່ຄວາມໝາຍຂອງຄຳວ່າການນຳ
ກັບຄືນມານັ້ນຄືການນຳເອົາຄວາມຊົ່ວ
ກັບມາຫາຄວາມຊົ່ວ, ຫລື ການມະລົນ
ມາຫາການມະລົນ, ຫລື ຄວາມຕ່ຳຊ້າມາ
ຫາຄວາມຕ່ຳຊ້າ—ຄວາມດີມາຫາສິ່ງທີ່
ດີ; ຄວາມຊອບທຳມາຫາສິ່ງທີ່ຊອບທຳ;
ຄວາມທ່ຽງທຳມາຫາສິ່ງທີ່ທ່ຽງທຳ; ຄວາມ
ເມດຕາມາຫາສິ່ງທີ່ມີຄວາມເມດຕາ.
14 ສະນັ້ນ, ລູກຂອງພໍ່, ຈົ່ງເບິ່ງວ່າລູກ
ມີຄວາມເມດຕາຕໍ່ພີ່ນ້ອງຂອງລູກ; ປະຕິ
ບັດ [ກ]ໂດຍທ່ຽງທຳ, [ຂ]ຕັດສິນໂດຍຊອບທຳ,
ແລະ ກະທຳ [ຄ]ຄວາມດີຕະຫລອດເວລາ;
ແລະ ຖ້າຫາກລູກເຮັດສິ່ງທັງໝົດນີ້ ແລ້ວ
ລູກຈະໄດ້ຮັບລາງວັນຂອງລູກ; ແທ້ຈິງ
ແລ້ວ, [ງ]ຄວາມເມດຕາຈະກັບຄືນມາຫາລູກ
ອີກ; ຄວາມຍຸດຕິທຳຈະກັບຄືນມາຫາລູກ
ອີກ; ການພິພາກສາອັນຊອບທຳຈະກັບຄືນ
ມາຫາລູກອີກ; ແລະ ລູກຈະມີຄວາມດີເປັນ
ລາງວັນແກ່ລູກອີກ.
15 ເພາະສິ່ງທີ່ລູກໄດ້ສົ່ງອອກໄປຈະກັບ
ຄືນມາຫາລູກອີກ, ແລະ ຈະຖືກນຳກັບຄືນ
ມາຫາ; ສະນັ້ນ, ຄຳວ່າການກັບຄືນມາຈຶ່ງ
ກ່າວໂທດຄົນບາບໂດຍຄົບຖ້ວນ, ແລະ ບໍ່
ໄດ້ເຮັດໃຫ້ຜູ້ນັ້ນເປັນຄົນຖືກຕ້ອງໄດ້ເລີຍ.

## ບົດທີ 42

*ຊີວິດທີ່ເປັນມະຕະເປັນເວລາແຫ່ງການທົດລອງເພື່ອໃຫ້ມະນຸດສາມາດກັບໃຈ ແລະ ຮັບໃຊ້ພຣະເຈົ້າ—ການຕົກໄດ້ນຳເອົາຄວາມຕາຍທາງໂລກ ແລະ ທາງວິນຍານມາຫາມະນຸດທຸກຄົນ—ການໄຖ່ມາເຖິງຜ່ານການກັບໃຈ—ພຣະເຈົ້າເອງໄດ້ຊົດໃຊ້ແທນບາບຂອງໂລກ—ຄວາມເມດຕາແມ່ນສຳລັບຜູ້ທີ່ກັບໃຈ—ສ່ວນຄົນອື່ນໆແມ່ນຂຶ້ນກັບຄວາມຍຸດຕິທຳຂອງພຣະເຈົ້າ—ຄວາມເມດຕາເກີດຂຶ້ນເພາະການຊົດໃຊ້—ຜູ້ທີ່ກັບໃຈຢ່າງແທ້ຈິງເທົ່ານັ້ນທີ່ຈະລອດ. ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ລູກຂອງພໍ່, ພໍ່ເຫັນວ່າມັນ
ຍັງມີສິ່ງທີ່ເຮັດໃຫ້ຈິດໃຈຂອງລູກກັງວົນ
ຢູ່, ຊຶ່ງລູກບໍ່ອາດເຂົ້າໃຈໄດ້—ຊຶ່ງກ່ຽວກັບ
[ກ]ຄວາມຍຸດຕິທຳຂອງພຣະເຈົ້າໃນການລົງ
ໂທດຄົນບາບ; ເພາະລູກພະຍາຍາມຄິດວ່າ
ມັນບໍ່ເປັນການຍຸດຕິທຳທີ່ຈະສົ່ງຄົນບາບ
ໄປຫາສະພາບແຫ່ງຄວາມທຸກທໍລະມານ.
2 ບັດນີ້ຈົ່ງເບິ່ງ, ລູກຂອງພໍ່, ພໍ່ຈະອະທິ
ບາຍເລື່ອງນີ້ແກ່ລູກ. ເພາະຈົ່ງເບິ່ງ, ຫລັງ
ຈາກອົງພຣະຜູ້ເປັນເຈົ້າ [ກ]ໄດ້ສົ່ງບິດາ
ມານດາຜູ້ທຳອິດຂອງພວກເຮົາອອກຈາກ
[ຂ]ສວນເອເດນເພື່ອໄຖດິນ, ເພາະຈາກດິນ
ນັ້ນເຂົາເຈົ້າໄດ້ອອກມາ—ແທ້ຈິງແລ້ວ,
ພຣະອົງໄດ້ຂັບໄລ່ເຂົາເຈົ້າອອກໄປ, ແລະ
ວາງ [ຄ]ເຄຣູບິມໄວ້ທີ່ປາຍສວນເອເດນທາງ
ຕາເວັນອອກ, ພ້ອມດ້ວຍດາບທີ່ເປັນແປວ
ໄຟຊຶ່ງຫັນໄປໄດ້ທຸກທາງ, ເພື່ອຮັກສາ [ງ]ຕົ້ນ
ໄມ້ແຫ່ງຊີວິດ—
3 ບັດນີ້, ພວກເຮົາເຫັນວ່າມະນຸດມາ

14 *ກ* ຄມພ ຊື່ສັດ, ຄວາມຊື່ສັດ.
*ຂ* ຢຣ 7:24; ຄພ 11:12.
*ຄ* ຄພ 6:13; 58:27–28.
*ງ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.

**42** 1 *ກ* 2 ນຟ 26:7; ມຊຢ 15:26–27. ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
2 *ກ* ປຖກ 3:23–24; ມຊ 4:28–31.
*ຂ* ຄມພ ເອເດນ.
*ຄ* ຄມພ ເຄຣູບິມ.
*ງ* ປຖກ 2:9.

ເປັນເໝືອນດັ່ງພຣະເຈົ້າ, ຮູ້ຄວາມດີ ແລະ
ຄວາມຊົ່ວ; ເພື່ອເຂົາເຈົ້າຈະບໍ່ໄດ້ຍື່ນມື
ອອກໄປ ແລະ ປິດເອົາໝາກໄມ້ຈາກຕົ້ນ
ໄມ້ແຫ່ງຊີວິດອີກ, ແລະ ກິນ ແລະ ມີຊີວິດຢູ່
ຕະຫລອດການ, ອົງພຣະຜູ້ເປັນເຈົ້າຈຶ່ງໄດ້
ວາງເຄຣູບິມກັບດາບທີ່ເປັນແປວໄຟໄວ້,
ເພື່ອເຂົາເຈົ້າຈະບໍ່ໄດ້ກິນໝາກໄມ້ນັ້ນ—
4 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນ, ວ່າມັນ
ມີເວລາທີ່ປະທານໃຫ້ມະນຸດເພື່ອກັບໃຈ,
ແທ້ຈິງແລ້ວ, ມັນມີ [ກ]ເວລາແຫ່ງການທົດ
ລອງ, ແມ່ນເວລາທີ່ຈະກັບໃຈ ແລະ ຮັບໃຊ້
ພຣະເຈົ້າ.
5 ເພາະຈົ່ງເບິ່ງ, ຖ້າຫາກອາດາມໄດ້ຍື່ນ
ມືຂອງລາວອອກໄປທັນທີ ແລະ ປິດເອົາ
ໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ, ລາວຈະມີຊີ
ວິດຊົ່ວນິລັນດອນ, ຕາມພຣະຄຳຂອງພຣະ
ເຈົ້າ, ຈະບໍ່ມີໄລຍະເວລາເພື່ອການກັບໃຈ;
ແທ້ຈິງແລ້ວ, ແລະ ພຣະຄຳຂອງພຣະເຈົ້າ
ຈະບໍ່ມີຄວາມໝາຍ, ແລະ ແຜນແຫ່ງຄວາມ
ລອດອັນຍິ່ງໃຫຍ່ຈະລົ້ມເຫລວໄປ.
6 ແຕ່ຈົ່ງເບິ່ງ, ມັນມີກຳນົດທີ່ຈະໃຫ້
ມະນຸດ [ກ]ຕາຍ—ສະນັ້ນ, ດັ່ງທີ່ເຂົາເຈົ້າໄດ້
ຖືກຕັດອອກຈາກຕົ້ນໄມ້ແຫ່ງຊີວິດ ແລ້ວ
ເຂົາເຈົ້າຈະຖືກຕັດອອກຈາກຜືນແຜ່ນດິນ
ໂລກນຳອີກ—ແລະ ມະນຸດຈະຫລົງທາງ
ຕະຫລອດໄປ, ແທ້ຈິງແລ້ວ, ເຂົາກາຍເປັນ
ມະນຸດທີ່ [ຂ]ຕົກໄປ.
7 ແລະ ບັດນີ້, ລູກເຫັນຈາກເລື່ອງນີ້
ວ່າບິດາມານດາຜູ້ທຳອິດຂອງພວກເຮົາ
ຖືກ [ກ]ຕັດອອກຈາກທີ່ປະທັບຂອງພຣະຜູ້
ເປັນເຈົ້າ ທັງທາງໂລກ ແລະ ທາງວິນຍານ
ແລ້ວ; ແລະ ພວກເຮົາຈຶ່ງເຫັນເຂົາເຈົ້າກາຍ
ມາເປັນຄົນທີ່ຂຶ້ນຢູ່ກັບການກະທຳຕາມ
[ຂ]ຄວາມປະສົງຂອງຕົນເອງດັ່ງນັ້ນ.
8 ບັດນີ້ ຈົ່ງເບິ່ງ, ມັນບໍ່ສົມຄວນທີ່ຈະ
ກູ້ມະນຸດຄືນຈາກຄວາມຕາຍທາງໂລກ,
ເພາະມັນຈະທຳລາຍ [ກ]ແຜນແຫ່ງຄວາມ
ສຸກອັນຍິ່ງໃຫຍ່.
9 ສະນັ້ນ, ຍ້ອນຈິດວິນຍານຕາຍບໍ່ໄດ້,
ແລະ [ກ]ການຕົກນຳເອົາຄວາມຕາຍທັງທາງ
ວິນຍານ ແລະ ທາງໂລກມາຫາມະນຸດຊາດ
ທັງປວງຄື, ພວກເຂົາຖືກຕັດອອກຈາກທີ່
ປະທັບຂອງພຣະຜູ້ເປັນເຈົ້າ, ມັນຈຶ່ງສົມ
ຄວນທີ່ຈະກູ້ມະນຸດຊາດຄືນຈາກຄວາມ
ຕາຍທາງວິນຍານນີ້.
10 ສະນັ້ນ, ເມື່ອພວກເຂົາກາຍເປັນຄົນ
ມີ [ກ]ການມະລົນ, ຕັນຫາໜ້າມືດ, ແລະ ຕ່ຳ
ຊ້າ ໂດຍ [ຂ]ທຳມະຊາດ, [ຄ]ສະພາວະແຫ່ງ
ການທົດລອງນີ້ຈຶ່ງກັບເປັນສະພາບໃຫ້
ພວກເຂົາຕຽມຕົວ; ມັນກັບເປັນສະພາບ
ເພື່ອການຕຽມຕົວ.
11 ແລະ ບັດນີ້ຈົ່ງຈຳໄວ້, ລູກຂອງພໍ່, ຖ້າ
ຫາກບໍ່ແມ່ນເພາະແຜນແຫ່ງການໄຖ່ (ຄື
ຖ້າບໍ່ມີ) ໃນທັນທີທີ່ພວກເຂົາຕາຍໄປ ຈິດ
ວິນຍານຂອງພວກເຂົາຍ່ອມ [ກ]ເປັນທຸກ,
ໂດຍທີ່ຖືກຕັດອອກຈາກທີ່ປະທັບຂອງ
ພຣະຜູ້ເປັນເຈົ້າ.
12 ແລະ ບັດນີ້, ບໍ່ມີວິທີກູ້ມະນຸດຄືນຈາກ
ສະພາບທີ່ຕົກນີ້, ຊຶ່ງມະນຸດນຳມາໃຫ້ຕົວ
ເອງ ເພາະຄວາມບໍ່ເຊື່ອຟັງຂອງເຂົາເອງ;

4 *ກ* ແອວ 34:32–33.
6 *ກ* ຄມພ ຄວາມຕາຍທາງຮ່າງກາຍ.
*ຂ* ມຊຢ 16:3–5. ຄມພ ການຕົກຂອງອາດາມ ແລະ ເອວາ.
7 *ກ* 2 ນຟ 2:5; 9:6; ຣລມ 14:16. ຄມພ ຄວາມຕາຍທາງວິນຍານ.
*ຂ* ຄມພ ອຳເພີໃຈ.
8 *ກ* ແອວ 34:9; ມຊ 6:62.
9 *ກ* ຄມພ ການຕົກຂອງອາດາມ ແລະ ເອວາ.
10 *ກ* ຄມພ ການມະລົນ.
*ຂ* ຄມພ ມະນຸດທີ່ມີຈິດໃຈທຳມະດາ.
*ຄ* ຄມພ ມະຕະ, ຄວາມເປັນມະຕະ.
11 *ກ* 2 ນຟ 9:7–9.

13 ສະນັ້ນ, ຕາມຄວາມຍຸດຕິທຳແລ້ວ, [ກ]ແຜນແຫ່ງການໄຖ່ຈະເກີດຂຶ້ນບໍ່ໄດ້, ເວັ້ນເສຍແຕ່ໂດຍເງື່ອນໄຂຂອງ [ຂ]ການກັບໃຈຂອງມະນຸດໃນສະພາບແຫ່ງການທົດລອງນີ້, ແທ້ຈິງແລ້ວ, ສະພາວະແຫ່ງການທົດລອງນີ້; ເພາະຖ້າຫາກມັນບໍ່ເປັນໄປຕາມເງື່ອນໄຂເຫລົ່ານີ້, ຄວາມເມດຕາຈະເກີດຜົນບໍ່ໄດ້ເວັ້ນເສຍແຕ່ຈະທຳລາຍວຽກງານແຫ່ງຄວາມຍຸດຕິທຳເສຍ. ບັດນີ້ວຽກງານແຫ່ງຄວາມຍຸດຕິທຳຈະຖືກທຳລາຍບໍ່ໄດ້; ຖ້າຫາກເປັນເຊັ່ນນັ້ນ, ພຣະເຈົ້າກໍຈະ [ຄ]ເລີກເປັນພຣະເຈົ້າ.

14 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າມະນຸດຊາດທັງປວງ [ກ]ຕົກແລ້ວ, ແລະ ພວກເຂົາຢູ່ໃນກຳມືແຫ່ງ [ຂ]ຄວາມຍຸດຕິທຳ; ແທ້ຈິງແລ້ວ, ຄວາມຍຸດຕິທຳຂອງພຣະເຈົ້າ, ຊຶ່ງສົ່ງພວກເຂົາໄປໃຫ້ຖືກຕັດອອກຈາກທີ່ປະທັບຂອງພຣະອົງຕະຫລອດການ.

15 ແລະ ບັດນີ້, ແຜນແຫ່ງຄວາມເມດຕາຈະເກີດຂຶ້ນບໍ່ໄດ້ຖ້າຫາກບໍ່ມີການຊົດໃຊ້ເກີດຂຶ້ນ; ສະນັ້ນ ພຣະເຈົ້າເອງຈຶ່ງ [ກ]ຊົດໃຊ້ແທນບາບຂອງໂລກ, ເພື່ອນຳແຜນແຫ່ງ [ຂ]ຄວາມເມດຕາມາ, ເພື່ອໃຫ້ພຽງພໍແກ່ຂໍ້ຮຽກຮ້ອງຂອງ [ຄ]ຄວາມຍຸດຕິທຳ, ເພື່ອພຣະເຈົ້າຈະເປັນພຣະເຈົ້າ [ງ]ທີ່ດີພ້ອມ, ທ່ຽງທຳ, ແລະ ເປັນພຣະເຈົ້າຜູ້ເມດຕານຳອີກ.

16 ບັດນີ້, ການກັບໃຈຈະມາສູ່ມະນຸດບໍ່ໄດ້ຖ້າຫາກບໍ່ມີການລົງໂທດ, ຊຶ່ງເປັນ [ກ]ນິລັນດອນດັ່ງຊີວິດຂອງຈິດວິນຍານຈະເປັນ, ໂດຍຕັ້ງໄວ້ກົງກັນຂ້າມກັບແຜນແຫ່ງຄວາມສຸກ, ຊຶ່ງເປັນນິລັນດອນດັ່ງຊີວິດຂອງຈິດວິນຍານນຳອີກ.

17 ບັດນີ້, ມະນຸດຈະກັບໃຈໄດ້ແນວໃດຖ້າຫາກເຂົາບໍ່ໄດ້ເຮັດ [ກ]ບາບ? ເຂົາຈະເຮັດບາບໄດ້ແນວໃດຖ້າຫາກບໍ່ມີ [ຂ]ກົດ? ກົດຈະມີໄດ້ແນວໃດຖ້າຫາກບໍ່ມີການລົງໂທດ?

18 ບັດນີ້, ມີການລົງໂທດຕັ້ງໄວ້, ແລະ ມີກົດທີ່ທ່ຽງທຳຕັ້ງໄວ້, ຊຶ່ງນຳຄວາມເສຍໃຈໃນ [ກ]ຈິດສຳນຶກມາຫາມະນຸດ.

19 ບັດນີ້, ຖ້າຫາກບໍ່ມີກົດໃຫ້ໄວ້—ຖ້າຫາກມະນຸດກະທຳ [ກ]ຄາດຕະກຳ ເຂົາກໍຄວນຕາຍ—ເຂົາຈະຢ້ານບໍວ່າ ເຂົາຈະຕາຍຖ້າເຂົາກະທຳຄາດຕະກຳ?

20 ແລະ ຖ້າຫາກບໍ່ມີກົດໃຫ້ໄວ້ເພື່ອຫ້າມການເຮັດບາບ ມະນຸດຈະບໍ່ຢ້ານທີ່ຈະເຮັດບາບເລີຍ.

21 ແລະ ຖ້າຫາກມັນ [ກ]ບໍ່ມີກົດໃຫ້ໄວ້, ຖ້າຫາກມະນຸດເຮັດບາບ ຄວາມຍຸດຕິທຳ ແລະ ຄວາມເມດຕາ ຈະເຮັດຫຍັງໄດ້, ເພາະທັງສອງຢ່າງນີ້ຈະບໍ່ມີສິດທິເໜືອກວ່າມະນຸດ?

22 ແຕ່ມີກົດໃຫ້ໄວ້, ແລະ ມີການລົງໂທດຕັ້ງໄວ້ ແລະ ໃຫ້ມີ [ກ]ການກັບໃຈ, ຊຶ່ງການກັບໃຈນີ້ ຄວາມເມດຕາມີສິດທິ; ບໍ່ດັ່ງນັ້ນ, ຄວາມຍຸດຕິທຳຈະມີສິດເໜືອກວ່າມະນຸດ ແລະ ບັງຄັບກົດ, ແລະ ກົດເຮັດໃຫ້ມີການລົງໂທດ; ຖ້າຫາກບໍ່ດັ່ງນັ້ນ, ວຽກງານແຫ່ງຄວາມຍຸດຕິທຳຈະຖືກທຳລາຍ, ແລະ ພຣະ

---

13 ກ ຄມພ ແຜນແຫ່ງການໄຖ່.
ຂ ຄມພ ກັບໃຈ, ການກັບໃຈ.
ຄ 2 ນຟ 2:13–14.
14 ກ ແອວ 22:13–14.
ຂ 2 ນຟ 2:5.
15 ກ 2 ນຟ 9:7–10; ມຊຢ 16:7–8. ຄມພ ຊົດໃຊ້, ການຊົດໃຊ້.
ຂ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
ຄ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
ງ 3 ນຟ 12:48.
16 ກ ຄພ 19:10–12.
17 ກ ຄມພ ບາບ.
ຂ ຣມ 4:15.
18 ກ ຄມພ ສຳນຶກ, ຄວາມສຳນຶກ.
19 ກ ຄມພ ຄາດຕະກຳ, ການຄາດຕະກຳ.
21 ກ 2 ນຟ 9:25–26; ມຊຢ 3:11.
22 ກ ຄມພ ກັບໃຈ, ການກັບໃຈ.

ເຈົ້າກໍຈະເລີກເປັນພຣະເຈົ້າ.
23 ແຕ່ພຣະເຈົ້າຈະບໍ່ເລີກເປັນພຣະ
ເຈົ້າ, ແລະ ກຄວາມເມດຕານີ້ສິດທິໃນຜູ້ທີ່
ສຳນຶກຜິດ, ແລະ ຄວາມເມດຕາເກີດຂຶ້ນ
ເພາະ ຂການຊົດໃຊ້; ແລະ ການຊົດໃຊ້ເຮັດ
ໃຫ້ເກີດ ຄການຟື້ນຄືນຊີວິດຂອງຄົນຕາຍ;
ແລະ ການຟື້ນຄືນຊີວິດຂອງຄົນຕາຍນຳ
ມະນຸດ ງກັບມາຫາທີ່ປະທັບຂອງພຣະເຈົ້າ;
ແລະ ຄົນທັງຫລາຍຈຶ່ງຖືກນຳກັບຄືນຫາທີ່
ປະທັບຂອງພຣະອົງ, ເພື່ອຈະຖືກ ຈພິພາກ
ສາຕາມວຽກງານຂອງພວກເຂົາ, ອັນເປັນ
ໄປຕາມກົດແຫ່ງຄວາມຍຸດຕິທຳ.
24 ເພາະຈົ່ງເບິ່ງ, ຄວາມຍຸດຕິທຳປະ
ຕິບັດຂໍ້ຮຽກຮ້ອງທັງໝົດຂອງມັນ, ແລະ
ຄວາມເມດຕາມີສິດທິໃນທຸກຢ່າງທີ່ເປັນ
ຂອງມັນເອງ; ແລະ ດ້ວຍປະການນີ້, ມັນຈຶ່ງ
ບໍ່ມີຜູ້ໃດລອດ ນອກຈາກຄົນທີ່ສຳນຶກຜິດ
ຢ່າງແທ້ຈິງ.
25 ລູກຄິດວ່າຄວາມເມດຕາຂະໂມຍ
ກຄວາມຍຸດຕິທຳໄດ້ບໍ? ພໍ່ເວົ້າກັບລູກວ່າ,
ບໍ່ໄດ້; ບໍ່ໄດ້ເລີຍແມ່ນແຕ່ໜ້ອຍດຽວ. ຖ້າ
ຫາກເປັນເຊັ່ນນັ້ນ, ພຣະເຈົ້າກໍຈະເລີກເປັນ
ພຣະເຈົ້າແລ້ວ.
26 ແລະ ດ້ວຍເຫດນີ້ ພຣະເຈົ້າຈຶ່ງນຳ
ກຈຸດປະສົງອັນເປັນນິລັນດອນຂອງພຣະ
ອົງມາ, ຊຶ່ງໄດ້ຕຽມໄວ້ ຂນັບຕັ້ງແຕ່ການວາງ
ຮາກຖານຂອງໂລກ. ແລະ ດ້ວຍເຫດນີ້ ມັນ
ຈຶ່ງເກີດມີຄວາມລອດ ແລະ ການໄຖ່ຂອງ
ມະນຸດ, ແລະ ຄວາມພິນາດ, ແລະ ຄວາມ
ທຸກທໍລະມານຂອງເຂົານຳອີກ.
27 ສະນັ້ນ, ໂອ້ ລູກຂອງພໍ່, ກຜູ້ໃດກໍຕາມ
ທີ່ຈະມາ ກໍຈະມາໄດ້ ແລະ ດື່ມນ້ຳແຫ່ງຊີ
ວິດຢ່າງມີອິດສະລະ; ແລະ ຜູ້ໃດກໍຕາມທີ່
ຈະບໍ່ມາ ຜູ້ນັ້ນກໍຈະບໍ່ຖືກບັງຄັບໃຫ້ມາ; ແຕ່
ໃນວັນສຸດທ້າຍ ສິ່ງທີ່ເຂົາໄດ້ ຂກະທຳໄວ້
ຈະ ຄກັບຄືນມາຫາເຂົາ.
28 ຖ້າຫາກເຂົາປາດຖະໜາຈະສ້າງ
ກຄວາມຊົ່ວ, ແລະ ບໍ່ກັບໃຈໃນວັນເວລາ
ຂອງເຂົາ, ຈົ່ງເບິ່ງ, ຄວາມຊົ່ວຈະເກີດກັບ
ເຂົາ, ຊຶ່ງເປັນຕາມການນຳກັບຄືນມາຂອງ
ພຣະເຈົ້າ.
29 ແລະ ບັດນີ້, ລູກຂອງພໍ່, ພໍ່ບໍ່ຢາກໃຫ້
ສິ່ງເຫລົ່ານີ້ເປັນທີ່ກັງວົນໃຈຕໍ່ລູກອີກຕໍ່ໄປ,
ແລະ ຂໍໃຫ້ບາບຂອງລູກເທົ່ານັ້ນເປັນສິ່ງທີ່
ກັງວົນໃຈລູກ, ດ້ວຍຄວາມກັງວົນນັ້ນ ມັນ
ຈະນຳລູກລົງມາສູ່ການກັບໃຈ.
30 ໂອ້ ລູກຂອງພໍ່, ພໍ່ປາດຖະໜາວ່າ ລູກ
ຈະບໍ່ປະຕິເສດຄວາມຍຸດຕິທຳຂອງພຣະ
ເຈົ້າອີກຕໍ່ໄປ. ຈົ່ງຢ່າພະຍາຍາມແກ້ຄວາມ
ຜິດເພາະບາບຂອງລູກ, ໂດຍປະຕິເສດ
ຄວາມຍຸດຕິທຳຂອງພຣະເຈົ້າ; ແຕ່ລູກຈົ່ງ
ຍອມໃຫ້ຄວາມຍຸດຕິທຳຂອງພຣະເຈົ້າ,
ແລະ ພຣະເມດຕາຂອງພຣະອົງ, ແລະ
ຄວາມອົດກັ້ນຂອງພຣະອົງມີອິດທິພົນຢ່າງ
ເຕັມທີ່ຢູ່ໃນໃຈຂອງລູກ; ຂໍໃຫ້ມັນນຳລູກ
ລົງມາຕ່ຳຢູ່ກັບຝຸ່ນດິນໃນ ກຄວາມຖ່ອມ
ຕົວ.
31 ແລະ ບັດນີ້, ໂອ້ ລູກຂອງພໍ່, ລູກໄດ້

23 ກ ຄນພ ເມດຕາ, ມີເມດຕາ, ຄວາມເມດຕາ.
ຂ ຄນພ ຊົດໃຊ້, ການຊົດໃຊ້.
ຄ 2 ນຟ 2:8; 9:4; ແອວ 7:12; 11:41–45; 12:24–25; ຣລມ 14:15–18; ມມ 9:13.
ງ ແອວ 40:21–24.
ຈ ຄນພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
25 ກ ຄນພ ຍຸດຕິທຳ, ຄວາມຍຸດຕິທຳ.
26 ກ 2 ນຟ 2:14–30; ມຊ 1:39.
ຂ ແອວ 13:3; 3 ນຟ 1:14.
27 ກ ແອວ 5:34; ຣລມ 14:30. ຄນພ ອຳເພີໃຈ.
ຂ ອຊຢ 59:18; ພນມ 20:12.
ຄ ແອວ 41:15.
28 ກ ແອວ 41:2–5.
30 ກ ຄນພ ຖ່ອມຕົນ, ຄວາມຖ່ອມຕົນ.

ຮັບ ການ ເອີ້ນ ຈາກ ພຣະ ເຈົ້າ ໃຫ້ ສັ່ງ ສອນ
ພຣະຄຳແກ່ຜູ້ຄົນພວກນີ້. ແລະ ບັດນີ້, ລູກ
ຂອງພໍ່, ຈົ່ງໄປເຖີດ, ຈົ່ງປະກາດພຣະຄຳ
ດ້ວຍຄວາມຈິງ ແລະ ດ້ວຍຄວາມມີສະຕິ,
ເພື່ອລູກຈະໄດ້ນຳຈິດວິນຍານທັງຫລາຍ
ມາສູ່ການກັບໃຈ, ເພື່ອແຜນແຫ່ງຄວາມ
ເມດຕາອັນຍິ່ງໃຫຍ່ຈະມີສິດທິເໜືອກວ່າ
ພວກເຂົາ. ແລະ ຂໍໃຫ້ພຣະເຈົ້າຈົ່ງໂປດ
ປະທານພອນໃຫ້ລູກຈົນວ່າມັນເປັນໄປ
ຕາມຄຳເວົ້າຂອງພໍ່ດ້ວຍເຖີດ. ອາແມນ.

## ບົດທີ 43

*ແອວມາ ແລະ ລູກຊາຍໄດ້ສັ່ງສອນພຣະຄຳ—ຊາວໂຊຣຳ ແລະ ຊາວນີໄຟຄົນອື່ນໆທີ່ແຍກອອກໄປ ກາຍເປັນຊາວເລມັນ—ຊາວເລມັນມາກໍ່ສົງຄາມກັບຊາວນີໄຟ—ໂມໂຣໄນປະກອບອາວຸດໃຫ້ຊາວນີໄຟດ້ວຍເຄື່ອງປ້ອງກັນຕ່າງໆ—ພຣະຜູ້ເປັນເຈົ້າເປີດເຜີຍແຜນການຍຸດທະສາດຂອງຊາວເລມັນຕໍ່ແອວມາ—ຊາວນີໄຟປ້ອງກັນບ້ານເຮືອນ, ເສລີພາບ, ຄອບຄົວ, ແລະ ສາດສະໜາຂອງພວກເຂົາ—ກອງທັບຂອງໂມໂຣໄນກັບລີໄຮປິດລ້ອມຊາວເລມັນ. ປະມານ 74 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ພວກລູກຊາຍຂອງແອວມາໄດ້ອອກໄປ
ໃນບັນດາຜູ້ຄົນ, ເພື່ອປະກາດພຣະຄຳແກ່
ພວກເຂົາ. ແລະ ແອວມາເອງກໍໄດ້ອອກໄປ
ຢ່າງບໍ່ໄດ້ພັກຜ່ອນເລີຍ.
2 ບັດນີ້ພວກເຮົາຈະບໍ່ກ່າວເຖິງການສັ່ງ
ສອນຂອງເຂົາເຈົ້າຕໍ່ໄປອີກ, ນອກຈາກວ່າ
ເຂົາເຈົ້າໄດ້ສັ່ງສອນພຣະຄຳ ແລະ ຄວາມ
ຈິງຕາມວິນຍານແຫ່ງການທຳນາຍ ແລະ
ການເປີດເຜີຍ; ແລະ ເຂົາເຈົ້າໄດ້ສັ່ງສອນ
ຕາມ [a]ລະບຽບອັນສັກສິດຂອງພຣະເຈົ້າຜູ້
ໄດ້ເອີ້ນເຂົາເຈົ້າ.
3 ແລະ ບັດນີ້ຂ້າພະເຈົ້າຈະກັບມາເວົ້າ
ກ່ຽວກັບສົງຄາມລະຫວ່າງຊາວນີໄຟ ແລະ
ຊາວເລມັນໃນປີທີສິບແປດແຫ່ງການປົກ
ຄອງຂອງຜູ້ຕັດສິນ.
4 ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື [a]ຊາວໂຊຣຳໄດ້ກາຍເປັນຊາວເລມັນ;
ສະນັ້ນ, ໃນຕົ້ນປີທີສິບແປດນີ້ ຜູ້ຄົນຂອງ
ນີໄຟໄດ້ເຫັນວ່າຊາວເລມັນກຳລັງຈະມາ
ໂຈມຕີພວກເຂົາ; ສະນັ້ນ ພວກເຂົາຈຶ່ງໄດ້
ຕຽມເພື່ອສົງຄາມ; ແທ້ຈິງແລ້ວ, ພວກເຂົາ
ໄດ້ເຕົ້າໂຮມເອົາກອງທັບຂອງພວກເຂົາທີ່
ຢູ່ໃນແຜ່ນດິນເຈີຊອນ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນໄດ້ຍົກກອງທັບທະຫານມາເປັນ
ຈຳນວນຫລາຍພັນຄົນ; ແລະ ພວກເຂົາ
ໄດ້ຍົກກອງທັບເຂົ້າມາໃນແຜ່ນດິນອານທິ
ໂອນຳ, ຊຶ່ງເປັນແຜ່ນດິນຂອງຊາວໂຊຣຳ;
ແລະ ຜູ້ນຳກອງທັບຂອງພວກເຂົາມີຊື່ວ່າ
ເຊຣາເຮັມນາ.
6 ແລະ ບັດນີ້, ໂດຍທີ່ຊາວອາມາລະໄຄ
ເປັນຄົນຊົ່ວ ແລະ ມັກຂ້າຄົນຫລາຍກວ່າ
ຊາວເລມັນ, ສະນັ້ນ, ເຊຣາເຮັມນາຈຶ່ງໄດ້
ແຕ່ງຕັ້ງຫົວໜ້ານາຍທະຫານຂຶ້ນເພື່ອດູ
ແລຊາວເລມັນ, ຊຶ່ງພວກຫົວໜ້າເຫລົ່ານັ້ນ
ເປັນຊາວອາມາລະໄຄ ແລະ ຊາວໂຊຣຳ.
7 ບັດນີ້ລາວໄດ້ເຮັດແບບນີ້ເພື່ອວ່າລາວ
ຈະໄດ້ເກັບກຳຄວາມຄຽດແຄ້ນຂອງພວກ
ເຂົາທີ່ມີຕໍ່ຊາວນີໄຟໄວ້, ເພື່ອລາວຈະໄດ້
ເອົາຄົນເຫລົ່ານັ້ນມາຢູ່ພາຍໃຕ້ການປົກ
ຄອງຕາມແຜນການຂອງລາວ.
8 ເພາະຈົ່ງເບິ່ງ, ແຜນການຂອງລາວຄື ຍຸ

**43** 2*a* ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
4*a* ແອວ 35:2–14; 52:33.

ແຍ່ໃຫ້ຊາວເລມັນຄຽດແຄ້ນໃຫ້ຊາວນີໄຟ; ລາວເຮັດແບບນີ້ເພື່ອວ່າລາວຈະໄດ້ແຍ້ງຊີງເອົາອຳນາດເພື່ອປົກຄອງຄົນເຫລົ່ານັ້ນ, ແລະ ເພື່ອວ່າລາວຈະໄດ້ມີອຳນາດປົກຄອງຊາວນີໄຟ ໂດຍເອົາພວກເຂົາເຫລົ່ານັ້ນມາເປັນທາດນຳອີກ.

9 ແລະ ບັດນີ້ແຜນການຂອງຊາວນີໄຟ
ນັ້ນແມ່ນ ການປົກປັກຮັກສາແຜ່ນດິນຂອງພວກເຂົາ, ແລະ ບ້ານເຮືອນຂອງພວກເຂົາ, ແລະ [ກ]ເມຍຂອງພວກເຂົາ, ແລະ ລູກຂອງພວກເຂົາ, ເພື່ອພວກເຂົາຈະໄດ້ປົກປັກຮັກສາສິ່ງເຫລົ່ານີ້ໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ; ແລະ ເພື່ອພວກເຂົາຈະໄດ້ຮັກສາສິດ ແລະ ສິດທິພິເສດຂອງພວກເຂົານຳອີກ, ແທ້ຈິງແລ້ວ, [ຂ]ເສລີພາບຂອງພວກເຂົານຳອີກ, ເພື່ອພວກເຂົາຈະໄດ້ນະມັດສະການພຣະເຈົ້າຕາມຄວາມປາດຖະໜາຂອງຕົນ.

10 ເພາະພວກເຂົາຮູ້ວ່າ ຖ້າຫາກພວກ
ເຂົາຕົກຢູ່ໃນກຳມືຂອງຊາວເລມັນແລ້ວ, ຄືຊາວເລມັນຈະທຳລາຍຜູ້ໃດກໍຕາມທີ່ [ກ]ນະມັດສະການພຣະເຈົ້າໃນ [ຂ]ວິນຍານ ແລະ ໃນຄວາມຈິງ, ຊຶ່ງເປັນພຣະເຈົ້າທີ່ທ່ຽງແທ້ ແລະ ຊົງພຣະຊົນຢູ່.

11 ແທ້ຈິງແລ້ວ, ແລະ ພວກເຂົາຮູ້ຈັກ
ເຖິງຄວາມກຽດຊັງອັນຍິ່ງໃຫຍ່ຂອງຊາວເລມັນທີ່ມີຕໍ່ [ກ]ພີ່ນ້ອງຂອງພວກເຂົາ, ຜູ້ຊຶ່ງເປັນຜູ້ຄົນຂອງອານໄທ-ນີໄຟ-ລີໄຮ, ຊຶ່ງມີຊື່ວ່າຜູ້ຄົນຂອງອຳໂມນ—ແລະ ຜູ້ຄົນເຫລົ່ານີ້ບໍ່ຍອມຈັບອາວຸດ, ແທ້ຈິງແລ້ວ, ພວກເຂົາໄດ້ເຂົ້າຢູ່ໃນພັນທະສັນຍາ ແລະ ພວກເຂົາຈະບໍ່ລະເມີດ—ສະນັ້ນ, ຖ້າຫາກພວກເຂົາຕົກຢູ່ໃນກຳມືຂອງຊາວເລມັນ, ພວກເຂົາກໍຈະຖືກທຳລາຍ.

12 ແລະ ຊາວນີໄຟບໍ່ຍອມໃຫ້ພວກເຂົາ
ຖືກທຳລາຍ; ສະນັ້ນ ຊາວນີໄຟຈຶ່ງໄດ້ມອບແຜ່ນດິນໃຫ້ພວກເຂົາເພື່ອເປັນມູນມໍລະດົກ.

13 ແລະ ຜູ້ຄົນຂອງອຳໂມນໄດ້ມອບ
ເຂົ້າຂອງຢ່າງຫລວງຫລາຍຂອງຕົນໃຫ້ແກ່ຊາວນີໄຟ ເພື່ອອູ້ມຊູກອງທັບຂອງພວກເຂົາ; ແລະ ດັ່ງນັ້ນ ຊາວນີໄຟຈຶ່ງຖືກບັງຄັບໃຫ້ຕ້ານທານຊາວເລມັນແຕ່ຝ່າຍດຽວ, ຊຶ່ງເປັນເຊື້ອສາຍຂອງເລມັນ ແລະ ເລມູເອນ, ແລະ ພວກລູກຫລານຂອງອິດຊະມາເອນ, ແລະ ຄົນທັງໝົດທີ່ໄດ້ແຍກອອກໄປຈາກຊາວນີໄຟຄື ຊາວອາມາລະໄຄ, ຊາວໂຊຣຳ, ແລະ [ກ]ເຊື້ອສາຍຂອງພວກປະໂລຫິດຂອງກະສັດໂນອາຄົນນັ້ນ.

14 ບັດ ນີ້ ຜູ້ ສືບ ເຊື້ອ ສາຍ ເຫລົ່າ ນີ້ ມີ
ຈຳນວນຫລວງຫລາຍເກືອບເທົ່າກັບຊາວນີໄຟ; ແລະ ສະນັ້ນຊາວນີໄຟຈຶ່ງຖືກບັງຄັບໃຫ້ຕໍ່ສູ້ກັບພີ່ນ້ອງຂອງຕົນດັ່ງນີ້, ຈົນກະທັ້ງມີການນອງເລືອດເກີດຂຶ້ນ.

15 ແລະ ເຫດການໄດ້ບັງເກີດຂຶ້ນ ໃນ
ຂະນະທີ່ກອງທັບຂອງຊາວເລມັນມາເຕົ້າໂຮມກັນຢູ່ໃນແຜ່ນດິນອານທິໂອນຳ, ຈົ່ງເບິ່ງ, ກອງທັບຂອງຊາວນີໄຟພ້ອມແລ້ວທີ່ຈະພົບກັບພວກເຂົາໃນແຜ່ນດິນເຈີຊອນ.

16 ບັດນີ້, ຜູ້ນຳຂອງຊາວນີໄຟ ຫລື ຜູ້ຖືກ
ແຕ່ງຕັ້ງໃຫ້ເປັນຫົວໜ້ານາຍທະຫານຂອງຊາວນີໄຟ—ບັດນີ້ຫົວໜ້ານາຍທະຫານຜູ້ນີ້ເປັນຜູ້ບັງຄັບບັນຊາກອງທັບທັງໝົດຂອງຊາວນີໄຟ—ແລະ ຊື່ຂອງເພິ່ນຄື ໂມໂຣໄນ;

17 ແລະ ໂມໂຣໄນໄດ້ຮັບຕຳແໜ່ງໃຫ້
ເປັນຜູ້ບັງຄັບບັນຊາທັງໝົດ ແລະ ພ້ອມກັບ

9 *ກ* ແອວ 44:5; 46:12.
*ຂ* ຄມພ ເສລີພາບ.
10 *ກ* ຄມພ ນະມັດສະການ.
*ຂ* ຢຮ 4:23–24.
11 *ກ* ແອວ 24:1–3, 5, 20; 25:1, 13; 27:2, 21–26.
13 *ກ* ແອວ 25:4.

ການປົກຄອງກ່ຽວກັບສົງຄາມ. ແລະ ເພິ່ນ
ມີອາຍຸພຽງແຕ່ຊາວຫ້າປີເທົ່ານັ້ນຕອນເພິ່ນ
ຖືກແຕ່ງຕັ້ງໃຫ້ເປັນຫົວໜ້ານາຍທະຫານ
ຂອງກອງທັບຊາວນີໄຟ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ພົບກັບຊາວເລມັນທີ່ຊາຍແດນເຈີຊອນ,
ແລະ ພວກທະຫານຂອງເພິ່ນໄດ້ຖືຫອກ,
ແລະ ດາບ, ແລະ ອາວຸດແຫ່ງສົງຄາມທຸກ
ຊະນິດ.
19 ແລະ ເມື່ອກອງທັບຊາວເລມັນເຫັນ
ວ່າຜູ້ຄົນຂອງນີໄຟ ຫລື ວ່າໂມໂຣໄນຕຽມ
ກອງທະຫານຂອງເພິ່ນໄວ້ພ້ອມດ້ວຍແຜ່ນ
ປົກເອິກ ແລະ ພ້ອມດ້ວຍເຄື່ອງປ້ອງກັນ
ແຂນ, ແທ້ຈິງແລ້ວ, ພ້ອມທັງເຄື່ອງປ້ອງກັນ
ຫົວຂອງພວກເຂົານຳອີກ, ແລະ ພວກເຂົາ
ນຸ່ງຫົ່ມເສື້ອຜ້າໜາ—
20 ບັດນີ້ກອງທັບຂອງເຊຣາເຮັມນາບໍ່
ໄດ້ມີການຕຽມສິ່ງເຫລົ່ານີ້ເລີຍ; ພວກເຂົາ
ມີພຽງແຕ່ຫອກ ແລະ ດາບ, ແລະ ຄັນທະ
ນູ ແລະ ລູກທະນູ, ແລະ ມີກ້ອນຫີນກັບກະ
ຖຸນຂອງພວກເຂົາ; ແລະ ຕົນຕົວຂອງພວກ
ເຂົາ [ກ]ເປືອຍເປົ່າ, ນອກຈາກແຜ່ນໜັງຄຽນ
ແອວເທົ່ານັ້ນ; ແທ້ຈິງແລ້ວ, ຕົນຕົວຂອງ
ພວກເຂົາທຸກຄົນເປືອຍເປົ່າໝົດ, ເວັ້ນເສຍ
ແຕ່ຊາວໂຊຣຳ ແລະ ຊາວອາມາລະໄຄ
ເທົ່ານັ້ນ;
21 ແຕ່ພວກເຂົາບໍ່ມີແຜ່ນປົກເອິກ ຫລື
ໂລ່—ສະນັ້ນ, ພວກເຂົາຈຶ່ງມີຄວາມຢ້ານ
ກົວກອງທັບຂອງຊາວນີໄຟຫລາຍທີ່ສຸດ
ເພາະວ່າເຄື່ອງນຸ່ງຂອງພວກນີໄຟ, ທັງໆທີ່
ຈຳນວນຄົນຂອງພວກເຂົາມີຫລາຍກວ່າ
ຊາວນີໄຟຕັ້ງຫລາຍເທົ່າ.
22 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດ
ຂຶ້ນຄື ພວກເຂົາບໍ່ກ້າມາສູ້ຮົບກັບຊາວນີໄຟ
ທີ່ຊາຍແດນເຈີຊອນເລີຍ; ສະນັ້ນພວກເຂົາ
ຈຶ່ງໄດ້ອອກໄປຈາກແຜ່ນດິນອານທີໂອນຳ
ແລະ ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານໄກ້
ຫົວແມ່ນ້ຳຊີໂດນ, ເພື່ອພວກເຂົາຈະໄດ້
ເຂົ້າໄປຫາແຜ່ນດິນແມນທາຍ ແລະ ຍຶດ
ເອົາຫົວເມືອງ; ເພາະພວກເຂົາບໍ່ຄິດວ່າ
ກອງທັບຂອງໂມໂຣໄນຮູ້ຈັກແລ້ວວ່າ ພວກ
ເຂົາໄດ້ໄປທາງໃດ.
23 ແຕ່ເຫດການໄດ້ບັງເກີດຂຶ້ນ, ໃນ
ທັນທີທີ່ພວກເຂົາເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ ໂມໂຣໄນກໍໄດ້ສົ່ງນັກສືບເຂົ້າໄປ
ໃນຖິ່ນແຫ້ງແລ້ງກັນດານເພື່ອຕິດຕາມ
ເບິ່ງຄ້າຍພັກຂອງພວກເຂົາ; ແລະ ໂມ
ໂຣໄນໂດຍທີ່ຮູ້ຈັກເຖິງການທຳນາຍຂອງ
ແອວມາ, ຈຶ່ງໄດ້ສົ່ງຄົນຈຳນວນໜຶ່ງໄປຫາ
ເພິ່ນ, ໂດຍປາດຖະໜາຈະໃຫ້ເພິ່ນທູນ
ຖາມພຣະຜູ້ເປັນເຈົ້າວ່າ ກອງທັບຂອງຊາວ
ນີໄຟຄວນຈະໄປສູ້ຮົບກັບຊາວເລມັນ [ກ]ຢູ່
ບ່ອນໃດເພື່ອປົກປ້ອງຕົວເອງ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງ
ແອວມາ, ແລະ ແອວມາໄດ້ບອກຂ່າວແກ່
ພວກສົ່ງສານຂອງໂມໂຣໄນວ່າ ກອງທັບ
ຂອງຊາວເລມັນກຳລັງຍົກທັບເດີນເຂົ້າໄປ
ໃນຖິ່ນແຫ້ງແລ້ງກັນດານ ເພື່ອຈະໄດ້ຂ້າມ
ມາຫາແຜ່ນດິນແມນທາຍ, ເພື່ອຈະໄດ້
ເລີ່ມໂຈມຕີຜູ້ຄົນທີ່ອ່ອນແອກວ່າພວກເຂົາ.
ແລະ ພວກສົ່ງສານໄດ້ໄປແຈ້ງຕໍ່ໂມໂຣໄນ.
25 ບັດນີ້ໂມໂຣໄນ, ຈຶ່ງໄດ້ໃຫ້ກອງທັບ
ສ່ວນໜຶ່ງຂອງເພິ່ນຄຸ້ມກັນຢູ່ໃນແຜ່ນດິນ
ເຈີຊອນ, ເພາະຢ້ານວ່າໂດຍວິທີໃດວິທີ
ໜຶ່ງຊາວເລມັນບາງຈຳນວນອາດຈະເຂົ້າ
ມາຍຶດເອົາແຜ່ນດິນນັ້ນ ແລະ ເຂົ້າເປັນ
ເຈົ້າຂອງ, ຈຶ່ງໄດ້ຍົກກອງທັບສ່ວນທີ່ເຫລືອ

20 *ກ* ອນ 1:20.
23 *ກ* ແອວ 48:16.

ຢູ່ ຂອງ ເພິ່ນ ແລະ ຂ້າມ ໄປ ຫາ ແຜ່ນ ດິນ
ແມນທາຍ.
26 ແລະ ເພິ່ນ ໄດ້ ສັ່ງ ໃຫ້ ຜູ້ ຄົນ ທັງ ໝົດ
ໃນແຜ່ນດິນສ່ວນນັ້ນມາເຕົ້າໂຮມກັນເພື່ອ
ຈະໄດ້ຕໍ່ສູ້ກັບຊາວເລມັນ, ເພື່ອ [ກ]ປົກປ້ອງ
ແຜ່ນ ດິນ ແລະ ປະເທດ ຊາດ ຂອງ ພວກ
ເຂົາ, ແລະ ສິດທິ ແລະ ເສ ລີ ພາບ ຂອງ
ພວກເຂົາ; ສະນັ້ນ ຜູ້ຄົນຈຶ່ງໄດ້ຕຽມພ້ອມຢູ່
ສະເໝີທີ່ຈະຕໍ່ສູ້ກັບຊາວເລມັນເມື່ອເວລາ
ພວກເຂົາເຂົ້າມາໂຈມຕີ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ສັ່ງໃຫ້ກອງທັບຂອງເພິ່ນໄປລີ້ຖ້າ
ຢູ່ໃນຮ່ອມພູ ຊຶ່ງຢູ່ໃກ້ກັບຝັ່ງແມ່ນ້ຳຊີໂດນ,
ຊຶ່ງມັນຢູ່ທາງຕາເວັນຕົກຂອງແມ່ນ້ຳຊີໂດນ
ໃນຖິ່ນແຫ້ງແລ້ງກັນດານ.
28 ແລະ ໂມໂຣໄນໄດ້ວາງຄົນສອດແນມ
ໄວ້ໂດຍຮອບ, ເພື່ອເພິ່ນຈະໄດ້ຮູ້ຈັກວ່າ
ເວລາໃດຄ້າຍຂອງຊາວເລມັນຈະມາຕັ້ງ
ຂຶ້ນ.
29 ແລະ ບັດນີ້, ໂມໂຣໄນຮູ້ຈັກເຈດຕະ
ນາຂອງຊາວເລມັນ, ວ່າພວກເຂົາຢາກຈະ
ທຳລາຍພີ່ນ້ອງຂອງຕົນ, ຫລື ເພື່ອຈະໄດ້
ນຳເອົາພວກເຂົາມາຂຶ້ນກັບພວກເຂົາ ແລະ
ເອົາພວກເຂົາເຫລົ່ານັ້ນມາເປັນທາດ ເພື່ອ
ພວກເຂົາເອງຈະໄດ້ສະຖາປະນາອານາ
ຈັກຂອງຕົນຂຶ້ນ ເພື່ອພວກເຂົາຈະໄດ້ປົກ
ຄອງທົ່ວແຜ່ນດິນ;
30 ແລະ ໂດຍທີ່ເພິ່ນໄດ້ຮູ້ຈັກອີກວ່າ
ຄວາມປາດຖະໜາຢ່າງດຽວຂອງຊາວ
ນີໄຟນັ້ນຄື ເພື່ອປົກປັກຮັກສາແຜ່ນດິນ
ຂອງພວກເຂົາ, ແລະ [ກ]ເສລີພາບຂອງພວກ
ເຂົາ, ແລະ ສາດສະໜາຈັກຂອງພວກເຂົາ,
ສະນັ້ນເພິ່ນຈຶ່ງຄິດວ່າມັນບໍ່ເປັນການກະ
ທຳບາບທີ່ເພິ່ນຈະປ້ອງກັນຊາວນີໄຟດ້ວຍ
ກົນອຸບາຍ; ສະນັ້ນ, ເພິ່ນຈຶ່ງຮູ້ຈັກໂດຍຄົນ
ສອດແນມຂອງເພິ່ນວ່າ ຊາວເລມັນຈະໄປ
ທາງໃດ.
31 ສະນັ້ນ, ເພິ່ນ ຈຶ່ງ ໄດ້ ແບ່ງ ກອງ ທັບ
ຂອງເພິ່ນ ແລະ ໄດ້ນຳເອົາສ່ວນໜຶ່ງໄປໃນ
ຮ່ອມພູ, ແລະ ລີ້ຢູ່ທາງຕາເວັນອອກ ແລະ
ທາງໃຕ້ຂອງເນີນພູຣິບລາ;
32 ແລະ ສ່ວນທີ່ເຫລືອນັ້ນ ເພິ່ນໄດ້ໃຫ້
ລີ້ຢູ່ໃນຮ່ອມພູທາງຕາເວັນຕົກຂອງແມ່ນ້ຳ
ຊີໂດນ, ຈົນສຸດຊາຍແດນຂອງແຜ່ນດິນ
ແມນທາຍ.
33 ເມື່ອ ເພິ່ນ ໄດ້ ຈັດ ວາງ ກອງ ທັບ ຂອງ
ເພິ່ນໄວ້ຕາມຄວາມປາດຖະໜາຂອງເພິ່ນ
ຮຽບຮ້ອຍແລ້ວ, ເພິ່ນກໍພ້ອມແລ້ວທີ່ຈະພົບ
ກັບພວກເຂົາ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນໄດ້ຍົກກອງທັບມາທາງເໜືອຂອງ
ເນີນພູ, ຊຶ່ງກອງທັບສ່ວນໜຶ່ງຂອງໂມໂຣ
ໄນໄດ້ລີ້ຖ້າຢູ່ແລ້ວ.
35 ແລະ ເວລາທີ່ຊາວເລມັນຜ່ານເນີນພູ
ຣິບລາ, ແລະ ມາຮອດຮ່ອມພູ, ແລະ ກຳລັງ
ຈະຂ້າມແມ່ນ້ຳຊີໂດນຢູ່ນັ້ນ, ກອງທັບທີ່ລີ້
ຖ້າຢູ່ທາງໃຕ້ຂອງເນີນພູ ຊຶ່ງນຳໂດຍຄົນຜູ້
ໜຶ່ງຊື່ວ່າ [ກ]ລີໄຮ, ແລະ ລາວໄດ້ນຳເອົາກອງ
ທັບຂອງລາວອອກມາ ແລະ ລ້ອມຊາວ
ເລມັນໄວ້ທາງຕາເວັນອອກທາງດ້ານຫລັງ.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາຊາວເລມັນເຫັນກອງທັບຊາວນີໄຟ
ເຂົ້າໂຈມຕີຂ້າງຫລັງ, ພວກເຂົາຈຶ່ງໄດ້ຫັນ
ກັບຄືນໄປ ແລະ ເລີ່ມຕໍ່ສູ້ກັບກອງທັບຂອງ
ລີໄຮ.
37 ແລະ ການຕາຍໄດ້ທະວີຂຶ້ນທັງສອງ
ຝ່າຍ, ແຕ່ວ່າການຕາຍຂອງຝ່າຍຊາວ
ເລມັນເປັນໜ້າຢ້ານກົວຫລາຍທີ່ສຸດ, ເພາະ

26 *ກ* ຄພ 134:11.
30 *ກ* ແອວ 46:12, 35.
35 *ກ* ແອວ 49:16.

ວ່າ [ກ]ຄວາມເປືອຍເປົ່າຂອງພວກເຂົາທີ່ຮັບ
ການຟັນຢ່າງໜັກຂອງຊາວນີໄຟດ້ວຍດາບ
ແລະ ຖືກແທງດ້ວຍຫອກ, ຄືທຸກເທື່ອທີ່ໄດ້
ຟັນລົງໄປຕ້ອງໄດ້ຂ້າເກືອບທຸກເທື່ອ.
38 ສ່ວນໃນບັນດາຊາວນີໄຟນັ້ນ, ດົນໆ
ຈຶ່ງຕາຍຄົນໜຶ່ງດ້ວຍດາບ ແລະ ດ້ວຍການ
ເສຍເລືອດ, ໂດຍທີ່ພວກເຂົາມີເຄື່ອງປ້ອງ
ກັນພາກສ່ວນສຳຄັນຂອງຮ່າງກາຍ, ແລະ
ພາກສ່ວນສຳຄັນທີ່ສຸດຂອງຮ່າງກາຍກໍມີ
ເຄື່ອງປ້ອງກັນໃຫ້ພົ້ນຈາກການຟັນຂອງ
ຊາວເລມັນ, ໂດຍມີ [ກ]ແຜ່ນປົກເອິກ ແລະ
ເຄື່ອງປ້ອງກັນແຂນ ແລະ ປ້ອງກັນຫົວ
ຂອງພວກເຂົາ; ດ້ວຍເຫດນີ້ ຊາວນີໄຟຈຶ່ງ
ໄດ້ຂ້າຊາວເລມັນຢ່າງຫລວງຫລາຍ.
39 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາວເລມັນມີຄວາມຢ້ານກົວຫລາຍ, ເພາະ
ຄວາມພິນາດອັນໃຫຍ່ຫລວງໃນບັນດາ
ພວກເຂົາ, ຈົນວ່າພວກເຂົາໄດ້ເລີ່ມປົບໜີ
ໄປທາງແມ່ນ້ຳຊີໂດນ.
40 ແລະ ພວກເຂົາຖືກລີໄຮ ແລະ ທະ
ຫານຂອງລາວໄລ່ຕິດຕາມໄປ; ແລະ ພວກ
ເຂົາຖືກລີໄຮໄລ່ລົງໄປໃນນ້ຳຊີໂດນ ແລະ
ພວກເຂົາໄດ້ຂ້າມນ້ຳຊີໂດນໄປ. ແລະ ລີໄຮ
ສັ່ງໃຫ້ກອງທັບຂອງລາວຢຸດທີ່ຝັ່ງແມ່ນ້ຳ
ຊີໂດນບໍ່ໃຫ້ຂ້າມໄປ.
41 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນ ແລະ ກອງທັບຂອງເພິ່ນໄດ້ພົບກັບ
ຊາວເລມັນໃນຮ່ອມພູທາງຝັ່ງແມ່ນ້ຳຊີໂດນ
ເບື້ອງນັ້ນ ແລະ ເລີ່ມໂຈມຕີ ແລະ ຂ້າຟັນ
ພວກເຂົາ.
42 ແລະ ຊາວເລມັນໄດ້ປົບໜີໄປທາງ
ໜ້າຂອງພວກເຂົາ, ໄປທາງແຜ່ນດິນ
ແມນທາຍ; ແລະ ພວກເຂົາໄດ້ພົບກັບກອງ
ທັບຂອງໂມໂຣໄນອີກ.
43 ບັດນີ້ເມື່ອເປັນດັ່ງນີ້ແລ້ວ ຊາວເລມັນ
ຈຶ່ງໄດ້ຕໍ່ສູ້ຈົນສຸດກຳລັງ; ແທ້ຈິງແລ້ວ, ມັນ
ບໍ່ເຄີຍມີຈັກເທື່ອທີ່ຊາວເລມັນຈະຕໍ່ສູ້ດ້ວຍ
ກຳລັງ ແລະ ດ້ວຍຄວາມກ້າຫານອັນໃຫຍ່
ຫລວງພຽງນີ້, ບໍ່ມີຈັກເທື່ອ, ບໍ່ເຄີຍມີເລີຍ
ຕັ້ງແຕ່ຕົ້ນ.
44 ແລະ ພວກເຂົາໄດ້ຮັບກຳລັງໃຈຈາກ
[ກ]ຊາວໂຊຣຳ ແລະ ຊາວອາມາລະໄຄ, ຜູ້ທີ່
ເປັນນາຍທະຫານຊັ້ນຫົວໜ້າ ແລະ ຜູ້ນຳ
ຂອງພວກເຂົາ, ແລະ ຈາກເຊຣາເຮັມນາ
ຜູ້ເປັນຫົວໜ້ານາຍທະຫານຂອງພວກ
ເຂົາ, ຫລື ຫົວໜ້າຜູ້ນຳ ແລະ ຜູ້ບັງຄັບບັນ
ຊາຂອງພວກເຂົາ; ແທ້ຈິງແລ້ວ, ພວກເຂົາ
ໄດ້ຕໍ່ສູ້ຄືກັນກັບມັງກອນ, ແລະ ຊາວນີໄຟ
ຫລາຍຄົນໄດ້ຖືກຂ້າຕາຍດ້ວຍມືຂອງພວກ
ເຂົາ, ແທ້ຈິງແລ້ວ, ເພາະວ່າພວກເຂົາໄດ້
ຟັນເຄື່ອງປ້ອງກັນຫົວເປັນຈຳນວນຫລວງ
ຫລາຍຂອງຊາວນີໄຟຂາດອອກເປັນສອງ
ຕ່ອນ, ແລະ ພວກເຂົາໄດ້ແທງແຜ່ນປົກ
ເອິກຂອງຊາວນີໄຟຊອດ, ແລະ ພວກເຂົາ
ໄດ້ຟັນແຂນຂອງຊາວນີໄຟຂາດຫລາຍ
ແຂນ, ແລະ ຊາວເລມັນໄດ້ຟັນລົງດ້ວຍ
ຄວາມຄຽດແຄ້ນທີ່ສຸດຂອງພວກເຂົາ.
45 ເຖິງຢ່າງໃດກໍຕາມ, ຊາວນີໄຟຍັງ
ໄດ້ຮັບກຳລັງໃຈດ້ວຍອຸດົມການທີ່ດີກວ່າ,
ເພາະວ່າພວກເຂົາບໍ່ໄດ້ [ກ]ຕໍ່ສູ້ເພື່ອກະສັດ
ຫລື ວ່າເພື່ອອຳນາດໃດໆ ແຕ່ພວກເຂົາໄດ້
ຕໍ່ສູ້ເພື່ອບ້ານເຮືອນຂອງພວກເຂົາ ແລະ
ເພື່ອ [ຂ]ເສລີພາບຂອງພວກເຂົາ, ແລະ ເພື່ອ
ເມຍຂອງພວກເຂົາ ແລະ ເພື່ອລູກຂອງ
ພວກເຂົາ, ແລະ ເພື່ອທຸກສິ່ງທຸກຢ່າງຂອງ
ພວກເຂົາ, ແທ້ຈິງແລ້ວ, ເພື່ອພິທີການແຫ່ງ
ການນະມັດສະການ ແລະ ເພື່ອສາດສະ
ໜາຈັກຂອງພວກເຂົາ ນຳອີກ.

37 *ກ* ແອວ 3:5.
38 *ກ* ແອວ 44:8–9.
44 *ກ* ແອວ 43:6.
45 *ກ* ແອວ 44:5.
*ຂ* ຄນພ ເສລີພາບ.

46 ແລະ ພວກເຂົາໄດ້ເຮັດທຸກສິ່ງທຸກຢ່າງທີ່ພວກເຂົາຮູ້ວ່າອັນໃດເປັນ [ກ]ໜ້າທີ່ຊຶ່ງພວກເຂົາໄດ້ເປັນໜີ້ພຣະເຈົ້າຂອງພວກເຂົາຢູ່; ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວກັບພວກເຂົາ ແລະ ບັນພະບຸລຸດຂອງພວກເຂົານຳອີກວ່າ: [ຂ]ຕາບໃດທີ່ເຈົ້າບໍ່ມີຄວາມຜິດຍ້ອນການຮຸກຮານເທື່ອ [ຄ]ທຳອິດ, ຫລື ເທື່ອທີສອງ, ຕາບນັ້ນເຮົາຈະບໍ່ຍອມໃຫ້ເຈົ້າຖືກຂ້າດ້ວຍມືສັດຕູຂອງເຈົ້າ.

47 ແລະ ອີກເທື່ອໜຶ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ເຈົ້າຈົ່ງ [ກ]ປ້ອງກັນຄອບຄົວຂອງເຈົ້າ ຈົນເຖິງການນອງເລືອດ. ສະນັ້ນຍ້ອນວ່າອຸດົມການອັນນີ້ ຊາວນີໄຟຈຶ່ງມີກຳລັງໃຈຕໍ່ສູ້ກັບຊາວເລມັນ ເພື່ອປ້ອງກັນຕົວເອງ, ແລະ ຄອບຄົວຂອງພວກເຂົາ, ແລະ ແຜ່ນດິນຂອງພວກເຂົາ, ແລະ ປະເທດຊາດຂອງພວກເຂົາ, ແລະ ສິດທິຂອງພວກເຂົາ, ແລະ ສາດສະໜາຂອງພວກເຂົາ.

48 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອຄົນຂອງໂມໂຣໄນໄດ້ເຫັນຄວາມເປັນໜ້າຢ້ານກົວ ແລະ ຄວາມຄຽດແຄ້ນຂອງຊາວເລມັນ ພວກເຂົາກໍເກືອບຈະປົບໜີໄປຈາກພວກນັ້ນ. ແລະ ໂມໂຣໄນໂດຍທີ່ເຫັນເຈດຕະນາຂອງພວກເຂົາ ຈຶ່ງໄດ້ອອກຄຳສັ່ງໂດຍໃຫ້ກຳລັງໃຈພວກເຂົາດ້ວຍຄວາມຄິດດັ່ງນີ້—ແທ້ຈິງແລ້ວ, ຄວາມຄິດເຖິງແຜ່ນດິນຂອງພວກເຂົາ, ເສລີພາບຂອງພວກເຂົາ, ແທ້ຈິງແລ້ວ, ອິດສະລະພາບຂອງພວກເຂົາຈາກຄວາມເປັນທາດ.

49 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຫັນກັບຄືນໄປຕໍ່ສູ້ກັບຊາວເລມັນ, ແລະ ພວກເຂົາໄດ້ [ກ]ຮ້ອງອອກມາເພື່ອທູນຂໍຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາເປັນສຽງດຽວກັນ, ເພື່ອເສລີພາບຂອງພວກເຂົາ ແລະ ເພື່ອອິດສະລະພາບຂອງພວກເຂົາຈາກຄວາມເປັນທາດ.

50 ແລະ ພວກເຂົາເລີ່ມຢືນຕໍ່ສູ້ກັບຊາວເລມັນດ້ວຍພະລັງ; ແລະ ໃນຕອນທີ່ພວກເຂົາກຳລັງຮ້ອງທູນຂໍຕໍ່ພຣະຜູ້ເປັນເຈົ້າເພື່ອອິດສະລະພາບຂອງຕົນຢູ່ນັ້ນ, ຊາວເລມັນກໍເລີ່ມຖອຍໜີໄປຕໍ່ໜ້າຂອງພວກເຂົາ; ແລະ ພວກເຂົາໄດ້ໜີໄປຈົນເຖິງແມ່ນ້ຳຊີໂດນ.

51 ບັດນີ້, ຊາວເລມັນມີຈຳນວນຫລາຍກວ່າ, ແທ້ຈິງແລ້ວ, ຫລາຍກວ່າຕັ້ງສອງເທົ່າຂອງຈຳນວນຂອງຊາວນີໄຟ; ປານນັ້ນ, ພວກເຂົາຍັງຖືກໄລ່ເຖິງຂະໜາດທີ່ພວກເຂົາຕ້ອງໄປເຕົ້າໂຮມກັນເປັນກອງດຽວຢູ່ໃນຮ່ອມພູເທິງຝັ່ງແມ່ນ້ຳຊີໂດນ.

52 ສະນັ້ນກອງທັບຂອງໂມໂຣໄນຈຶ່ງອ້ອມພວກເຂົາໄວ້ທັງສອງຝັ່ງແມ່ນ້ຳ, ຈົ່ງເບິ່ງ, ທາງຕາເວັນອອກກໍມີຄົນຂອງລີໄຮເຕັນຢູ່.

53 ສະນັ້ນ ເວລາເຊຣາເຮັມນາເຫັນຄົນຂອງລີໄຮຢູ່ທາງຕາເວັນອອກຂອງແມ່ນ້ຳຊີໂດນ, ແລະ ກອງທັບຂອງໂມໂຣໄນຢູ່ທາງຕາເວັນຕົກຂອງແມ່ນ້ຳຊີໂດນ, ແລະ ເຫັນວ່າເຂົາຖືກຊາວນີໄຟລ້ອມ ກໍເກີດມີຄວາມຢ້ານກົວ ແລະ ຕົກໃຈຫລາຍຂຶ້ນ.

54 ບັດນີ້ໂມໂຣໄນ, ເມື່ອເຫັນຄວາມຢ້ານກົວຂອງຊາວເລມັນ, ແລ້ວເພິ່ນກໍສັ່ງໃຫ້ຄົນຂອງເພິ່ນຢຸດການຂ້າຟັນລົງ.

## ບົດທີ 44

*ໂມໂຣໄນອອກຄຳສັ່ງໃຫ້ຊາວເລມັນເຮັດ*

46 *ກ* ຄມພ ໜ້າທີ່.
*ຂ* ແອວ 48:14; ຄພ 98:33–36.
*ຄ* 3 ນຟ 3:21; ຄພ 98:23–24.
47 *ກ* ຄພ 134:11.
49 *ກ* ອພຍ 2:23–25; ມຊຢ 29:20.

*ຄຳໝັ້ນສັນຍາແຫ່ງສັນຕິພາບ ຖ້າບໍ່ດັ່ງນັ້ນ ພວກເຂົາຈະຖືກທຳລາຍ—ເຊຣາເຮັມນາ ປະຕິເສດຂໍ້ສະເໜີນັ້ນ, ແລະ ການສູ້ຮົບເລີ່ມຕົ້ນອີກ—ກອງທັບຂອງ ໂມໂຣໄນ ຊະນະຊາວເລມັນ. ປະມານ 74–73 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ ຢຸດ ແລະ ຖອຍອອກຫ່າງຈາກ
ພວກເຂົາ. ແລະ ໂມໂຣໄນໄດ້ເວົ້າກັບ
ເຊຣາເຮັມນາວ່າ: ຈົ່ງເບິ່ງ, ເຊຣາເຮັມນາ,
ຂ້າພະເຈົ້າ [a]ບໍ່ ແມ່ນຄົນກະຫາຍເລືອດ.
ທ່ານຢູ່ໃນກຳມືຂອງຂ້າພະເຈົ້າແລ້ວ, ແຕ່
ວ່າຂ້າພະເຈົ້າບໍ່ປາດຖະໜາທີ່ຈະຂ້າທ່ານ.
2 ຈົ່ງເບິ່ງ, ພວກເຮົາບໍ່ໄດ້ອອກມາສູ້ຮົບ
ກັບທ່ານ ເພື່ອຈະເຮັດໃຫ້ທ່ານເລືອດຕົກ
ຍາງອອກໂດຍຫວັງອຳນາດ; ທັງພວກເຮົາ
ບໍ່ປາດຖະໜາຈະເອົາໃຜມາສູ່ແອກແຫ່ງ
ຄວາມເປັນທາດ. ແຕ່ນີ້ຄືສາເຫດອັນແທ້ຈິງ
ທີ່ທ່ານມາສູ້ຮົບກັບພວກເຮົາ; ແທ້ຈິງແລ້ວ,
ທ່ານຄຽດແຄ້ນໃຫ້ພວກເຮົາເພາະສາດສະ
ໜາຂອງພວກເຮົາ.
3 ແຕ່ບັດນີ້, ທ່ານເຫັນແລ້ວວ່າ ພຣະຜູ້
ເປັນເຈົ້າສະຖິດຢູ່ກັບພວກເຮົາ ແລະ ທ່ານ
ເຫັນແລ້ວວ່າພຣະອົງສົ່ງຕົວທ່ານມາຢູ່ໃນ
ກຳມືຂອງພວກເຮົາ. ແລະ ບັດນີ້ຂ້າພະເຈົ້າ
ຢາກໃຫ້ທ່ານເຂົ້າໃຈວ່າ ມັນເປັນໄປແນວ
ນີ້ກັບພວກເຮົາ ເພາະສາດສະໜາ ແລະ
ສັດທາຂອງພວກເຮົາໃນພຣະຄຣິດ. ແລະ
ບັດນີ້ທ່ານເຫັນແລ້ວວ່າ ທ່ານທຳລາຍ
ສັດທາຂອງພວກເຮົາບໍ່ໄດ້.
4 ບັດນີ້ທ່ານເຫັນແລ້ວວ່າ ນີ້ຄືສັດທາທີ່
ແທ້ຈິງຂອງພວກເຮົາທີ່ມີຕໍ່ພຣະເຈົ້າ; ແທ້
ຈິງແລ້ວ, ທ່ານເຫັນວ່າພຣະເຈົ້າອູ້ມຊູ ແລະ
ປົກປັກຮັກສາ ແລະ ປ້ອງກັນພວກເຮົາ,
ຕາບໃດທີ່ພວກເຮົາຊື່ສັດຕໍ່ພຣະອົງ, ຕໍ່
ສັດທາຂອງພວກເຮົາ, ແລະ ຕໍ່ສາດສະໜາ
ຂອງພວກເຮົາ; ພຣະຜູ້ເປັນເຈົ້າຈະບໍ່ຍອມ
ໃຫ້ພວກເຮົາຖືກທຳລາຍເລີຍ ຖ້າຫາກ
ພວກເຮົາບໍ່ໄດ້ຕົກໄປສູ່ການລ່ວງລະເມີດ
ແລະ ປະຕິເສດສັດທາຂອງພວກເຮົາ.
5 ແລະ ບັດນີ້, ເຊຣາເຮັມນາ, ຂ້າພະ
ເຈົ້າບັນຊາທ່ານ, ໃນພຣະນາມຂອງພຣະ
ເຈົ້າຜູ້ມີອຳນາດທັງປວງອົງນັ້ນ, ຜູ້ໃຫ້ກຳ
ລັງແກ່ແຂນຂອງພວກເຮົາ ຈົນວ່າພວກ
ເຮົາມີອຳນາດເກີນກວ່າທ່ານ, ດ້ວຍສັດທາ
ຂອງພວກເຮົາ, ດ້ວຍສາດສະໜາຂອງ
ພວກເຮົາ, ແລະ ດ້ວຍ [a]ພິທີການແຫ່ງການ
ນະມັດສະການຂອງພວກເຮົາ, ແລະ ດ້ວຍ
ສາດສະໜາຈັກຂອງພວກເຮົາ, ແລະ ດ້ວຍ
ຄວາມຊ່ວຍເຫລືອອັນສັກສິດທີ່ພວກເຮົາ
ໄດ້ເປັນໜີ້ເມຍຂອງພວກເຮົາ ແລະ ລູກ
ຂອງພວກເຮົາ, ດ້ວຍ [b]ເສລີພາບ ຊຶ່ງຜູກ
ມັດພວກເຮົາໄວ້ກັບແຜ່ນດິນຂອງພວກ
ເຮົາ ແລະ ປະເທດຊາດຂອງພວກເຮົາ;
ແທ້ຈິງແລ້ວ, ແລະ ດ້ວຍການຮັກສາພຣະ
ຄຳອັນສັກສິດຂອງພຣະເຈົ້າ, ຊຶ່ງພວກເຮົາ
ໄດ້ເປັນໜີ້ຢູ່ສຳລັບຄວາມຜາສຸກຂອງພວກ
ເຮົານີ້; ແລະ ທຸກສິ່ງທຸກຢ່າງເປັນທີ່ຮັກ
ຫອມທີ່ສຸດຂອງພວກເຮົາ—
6 ແທ້ຈິງແລ້ວ, ນີ້ຍັງບໍ່ໝົດ; ເພື່ອເຫັນແກ່
ຊີວິດຂອງທ່ານ, ຂ້າພະເຈົ້າຈຶ່ງບັນຊາທ່ານ
ໃຫ້ມອບອາວຸດແຫ່ງສົງຄາມຂອງທ່ານທັງ
ໝົດໃຫ້ຂ້າພະເຈົ້າເສຍ, ແລ້ວຂ້າພະເຈົ້າ
ຈະບໍ່ພະຍາຍາມເອົາຊີວິດຂອງທ່ານ, ແຕ່
ຈະໄວ້ຊີວິດຂອງທ່ານ, ຖ້າຫາກທ່ານຈະ
ໄປຕາມເສັ້ນທາງຂອງທ່ານ ແລະ ບໍ່ກັບມາ
ເຮັດສົງຄາມກັບພວກເຮົາອີກ.

**44** 1*ກ* ແອວ 43:45. 5*ກ* ຄມພ ພິທີການ. *ຂ* ຄມພ ເສລີພາບ.

7 ແລະ ບັດ ນີ້, ຖ້າ ທ່ານ ບໍ່ ເຮັດ ຕາມ,
ຈົ່ງ ເບິ່ງ, ທ່ານ ຢູ່ ໃນ ກໍາມືຂອງພວກ ເຮົາ,
ແລະ ຂ້າພະເຈົ້າຈະສັ່ງໃຫ້ຄົນຂອງຂ້າພະ
ເຈົ້າເຂົ້າ ໂຈມຕີທ່ານ, ແລະ ເຮັດໃຫ້ຮ່າງ
ກາຍ ຂອງທ່ານ ໄດ້ຮັບບາດ ເຈັບ ຢ່າງສາ
ຫັດ, ເພື່ອທ່ານຈະ ໄດ້ໝົດສິ້ນໄປ; ແລະ
ເວລານັ້ນ ພວກເຮົາຈະໄດ້ເຫັນວ່າຜູ້ໃດ
ມີອໍານາດເໜືອກວ່າຜູ້ຄົນພວກນີ້; ແທ້ຈິງ
ແລ້ວ, ພວກເຮົາຈະໄດ້ເຫັນວ່າຜູ້ໃດຖືກນໍາ
ເອົາໄປສູ່ຄວາມເປັນທາດ.

8 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອເຊຣາເຮັມນາໄດ້ຍິນຂໍ້ຄວາມນີ້ແລ້ວ
ລາວໄດ້ອອກມາ ແລະ ໄດ້ມອບທອກ ແລະ
ດາບ, ແລະ ຄັນທະນູໃສ່ມືໂມໂຣໄນ, ແລະ
ເວົ້າກັບເພິ່ນວ່າ: ຈົ່ງເບິ່ງ, ນີ້ຄືອາວຸດແຫ່ງ
ສົງຄາມຂອງພວກເຮົາ, ແລະ ພວກເຮົາຈະ
ມອບມັນໃຫ້ແກ່ທ່ານ, ແຕ່ວ່າພວກເຮົາຈະ
ບໍ່ຍອມຕົວເຮັດ *ກ*ຄໍາສາບານຕໍ່ທ່ານ, ເພາະ
ພວກ ເຮົາຮູ້ຈັກວ່າພວກ ເຮົາ ແລະ ລູກ
ຫລານຂອງພວກເຮົາຈະລ່ວງລະເມີດມັນ;
ແຕ່ ຈົ່ງຮັບ ເອົາອາວຸດ ແຫ່ງສົງຄາມຂອງ
ພວກເຮົາໄວ້ສາ, ແລະ ປ່ອຍໃຫ້ພວກເຮົາ
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານເສຍ; ຖ້າ
ບໍ່ດັ່ງນັ້ນ ພວກເຮົາຈະຮັກສາອາວຸດຂອງ
ພວກ ເຮົາໄວ້, ເຖິງແມ່ນວ່າພວກເຮົາຈະ
ຕາຍ ຫລື ຊະນະກໍຕາມ.

9 ຈົ່ງເບິ່ງ, ພວກເຮົາບໍ່ໄດ້ຢູ່ໃນສັດທາອັນ
ດຽວກັນກັບທ່ານ; ພວກເຮົາບໍ່ເຊື່ອວ່າພຣະ
ເຈົ້າໄດ້ສົ່ງພວກເຮົາໃຫ້ມາຢູ່ໃນກໍາມືຂອງ
ທ່ານ; ແຕ່ພວກເຮົາເຊື່ອວ່າມັນເປັນຍ້ອນ
ເລ່ຫລ່ຽມຂອງທ່ານທີ່ໄດ້ປົກປ້ອງຕົວເອງ
ໃຫ້ພົ້ນຈາກດາບຂອງພວກເຮົາ. ຈົ່ງເບິ່ງ,
ມັນເປັນຍ້ອນ *ກ*ແຜ່ນປົກເອິກ ແລະ ໂລ່ທີ່
ປົກປ້ອງທ່ານໄວ້.

10 ແລະ ບັດນີ້ເວລາເຊຣາເຮັມນາໄດ້
ເວົ້າຈົບແລ້ວ, ໂມໂຣໄນກໍສົ່ງດາບ ແລະ
ອາວຸດແຫ່ງສົງຄາມຄືນໃຫ້ເຊຣາເຮັມນາ,
ຊຶ່ງລາວໄດ້ຮັບເອົາຄືນ, ກ່າວວ່າ: ຈົ່ງເບິ່ງ
ພວກເຮົາຈະຢຸດການຕໍ່ສູ້.

11 ບັດນີ້ຂ້າພະເຈົ້າຈະເອົາຄວາມເວົ້າ
ທີ່ເວົ້າໄປແລ້ວຄືນບໍ່ໄດ້, ສະນັ້ນ ຕາບໃດ
ທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່, ທ່ານຈະ
ອອກໄປບໍ່ໄດ້ ເວັ້ນເສຍແຕ່ທ່ານຈະອອກ
ໄປພ້ອມກັບຄໍາສາບານວ່າ ທ່ານຈະບໍ່ກັບ
ມາກໍ່ສົງຄາມກັບພວກເຮົາອີກ. ບັດນີ້ທ່ານ
ຢູ່ໃນກໍາມືຂອງພວກເຮົາແລ້ວ ແລະ ພວກ
ເຮົາຈະເຮັດໃຫ້ເລືອດຂອງທ່ານຕົກລົງສູ່
ພື້ນດິນເວລາໃດກໍໄດ້, ບໍ່ດັ່ງນັ້ນທ່ານຈົ່ງ
ຍອມຮັບເອົາເງື່ອນໄຂຊຶ່ງຂ້າພະເຈົ້າໄດ້ສະ
ເໜີມານັ້ນ.

12 ແລະ ບັດ ນີ້ ເມື່ອ ໂມ ໂຣ ໄນ ກ່າວ ຂໍ້
ຄວາມ ນີ້ ແລ້ວ, ເຊຣາເຮັມນາກໍຈັບ ເອົາ
ດາບຂອງລາວໄວ້, ຍ້ອນຄວາມຄຽດແຄ້ນ
ໃຫ້ ໂມ ໂຣ ໄນຫລາຍ, ແລະ ລາວ ໄດ້ແລ່ນ
ມາໃສ່ເພື່ອຈະໄດ້ຂ້າໂມໂຣໄນ; ແຕ່ເວລາ
ລາວກໍາລັງຍົກດາບຂຶ້ນນັ້ນ, ຈົ່ງເບິ່ງ, ທະ
ຫານຜູ້ໜຶ່ງຂອງໂມໂຣໄນໄດ້ຟັນມັນຈົນຕົກ
ລົງຢູ່ພື້ນດິນ ແລະ ມັນຫັກຢູ່ໃກ້ດ້າມ; ແລະ
ລາວໄດ້ຟັນເຊຣາເຮັມນາອີກ ຄືລາວໄດ້
ຕັດໜັງຫົວຂອງລາວ ແລະ ມັນໄດ້ຕົກລົງຢູ່
ພື້ນດິນ. ແລະ ເຊຣາເຮັມນາຈຶ່ງຖອຍໜີໄປ
ຕໍ່ໜ້າພວກເຂົາເຂົ້າໄປຢູ່ໃນທ່າມກາງກອງ
ທະຫານຂອງຕົນ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ທະ
ຫານຜູ້ທີ່ຢືນຢູ່ຂ້າງ, ຊຶ່ງເປັນຜູ້ຕັດໜັງຫົວ
ຂອງເຊຣາເຮັມນາອອກ, ໄດ້ຈັບເອົາໜັງ
ຫົວຂຶ້ນຈາກພື້ນດິນໂດຍຈັບເສັ້ນຜົມ, ແລະ
ສຽບມັນໄວ້ທີ່ປາຍດາບ ແລະ ເດ່ມັນອອກ

8*ກ* ຄມພ ຄໍາສາບານ.

9*ກ* ແອວ 43:38.

ໄປ ຫາ ພວກ ເລມັນ, ແລະ ຮ້ອງ ໃສ່ ພວກ
ເຂົາດ້ວຍສຽງອັນດັງວ່າ:
14 ໜັງຫົວຂອງຫົວໜ້າຂອງພວກທ່ານ
ຕົກລົງພື້ນດິນແບບໃດ, ພວກທ່ານກໍຈະ
ລົ້ມລົງກັບພື້ນດິນແບບນັ້ນ, ເວັ້ນເສຍແຕ່
ພວກທ່ານຈະມອບອາວຸດແຫ່ງສົງຄາມ
ຂອງພວກທ່ານໃຫ້ພວກເຮົາເສຍກ່ອນ
ແລ້ວອອກໄປພ້ອມດ້ວຍພັນທະສັນຍາ
ແຫ່ງສັນຕິພາບ.
15 ບັດນີ້ເມື່ອຊາວເລມັນໄດ້ຍິນຂໍ້ຄວາມ
ນີ້ແລ້ວ ແລະ ໄດ້ເຫັນໜັງຫົວຢູ່ປາຍດາບ,
ພວກເຂົາຫລາຍຄົນເກີດມີຄວາມຢ້ານ
ກົວຂຶ້ນ; ແລະ ພວກເຂົາໄດ້ອອກມາ ແລະ
ໂຍນອາວຸດແຫ່ງສົງຄາມໄວ້ທີ່ຕີນຂອງໂມ
ໂຣໄນ, ແລະ ເຂົ້າມາເຮັດ *ກ*ພັນທະສັນຍາ
ແຫ່ງສັນຕິພາບ. ແລະ ຫລາຍຕໍ່ຫລາຍຄົນ
ໄດ້ເຂົ້າມາເຮັດພັນທະສັນຍາ ແລະ ໄດ້ໜີ
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.
16 ບັດນີ້ເຫດການ ໄດ້ບັງເກີດຂຶ້ນຄື
ເຊຣາເຮັມນາກໍມີຄວາມຄຽດແຄ້ນຂຶ້ນ
ຫລາຍກວ່າເກົ່າ, ແລະ ລາວໄດ້ຍຸຍົງໃຫ້
ພວກທະຫານສ່ວນທີ່ເຫລືອຢູ່ຂອງລາວໃຫ້
ມີຄວາມຄຽດແຄ້ນເພື່ອພວກເຂົາຈະໄດ້ຕໍ່ສູ້
ຢ່າງຮຸນແຮງກັບຊາວນີໄຟອີກ.
17 ແລະ ບັດນີ້ໂມໂຣໄນມີຄວາມຄຽດ
ແຄ້ນຫລາຍຂຶ້ນຍ້ອນຄວາມດື້ດ້ານຂອງ
ຊາວເລມັນ; ສະນັ້ນເພິ່ນຈຶ່ງໄດ້ສັ່ງໃຫ້ກອງ
ທັບຂອງເພິ່ນເຂົ້າໂຈມຕີ ແລະ ຂ້າພວກ
ເຂົາເຫລົ່ານັ້ນຖິ້ມ. ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ທະຫານຂອງໂມໂຣໄນໄດ້ເລີ່ມ
ຂ້າພວກເຂົາ; ແທ້ຈິງແລ້ວ, ຊາວເລມັນກໍ
ໄດ້ຕໍ່ສູ້ດ້ວຍດາບຢ່າງສຸດກຳລັງຂອງຕົນ.
18 ແຕ່ຈົ່ງເບິ່ງ, ເນື້ອໜັງຂອງພວກເຂົາ
ເປືອຍເປົ່າ ແລະ ຫົວກໍບໍ່ມີສິ່ງປົດບັງ ຈຶ່ງໄດ້
ເປີດປ່ອງໃຫ້ດາບອັນແຫລມຄົມຂອງຊາວ
ນີໄຟ; ແທ້ຈິງແລ້ວ, ຈົ່ງເບິ່ງ ພວກເຂົາຖືກ
ແທງ ແລະ ຖືກຟັນ, ແລະ ໄດ້ລົ້ມຕາຍຢ່າງ
ວ່ອງໄວດ້ວຍດາບຂອງຊາວນີໄຟ ແລະ
ພວກເຂົາເລີ່ມຖືກກວາດລົງດັ່ງທີ່ທະຫານ
ຂອງໂມໂຣໄນທຳນາຍໄວ້.
19 ບັດນີ້ເມື່ອເຊຣາເຮັມນາເຫັນວ່າພວກ
ຕົນເກືອບຈະຖືກຂ້າຕາຍໝົດແລ້ວ, ຈຶ່ງໄດ້
ຮ້ອງອອກມາຢ່າງສຸດກຳລັງຕໍ່ໂມໂຣໄນ,
ສັນຍາວ່າລາວ ແລະ ຜູ້ຄົນຂອງລາວຈະ
ເຮັດພັນທະສັນຍາ, ຖ້າຫາກທາງຝ່າຍນີໄຟ
ຈະໄວ້ຊີວິດຊາວເລມັນຜູ້ທີ່ຍັງເຫລືອຢູ່, ວ່າ
ພວກເຂົາຈະບໍ່ມາກໍ່ສົງຄາມກັບຊາວນີໄຟ
*ກ*ອີກ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ສັ່ງໃຫ້ການຂ້າຟັນຢຸດລົງ. ແລະ
ເພິ່ນໄດ້ຮັບເອົາອາວຸດແຫ່ງສົງຄາມຈາກ
ຊາວເລມັນ; ແລະ ຫລັງຈາກພວກເຂົາເຂົ້າ
ມາເຮັດ *ກ*ພັນທະສັນຍາແຫ່ງສັນຕິພາບກັບ
ເພິ່ນແລ້ວ ພວກເຂົາຈຶ່ງໄດ້ຮັບອະນຸຍາດ
ໃຫ້ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.
21 ບັດນີ້ພວກເຮົາບໍ່ໄດ້ນັບຈຳນວນຄົນ
ທີ່ຕາຍໄປ ຍ້ອນວ່າຄວາມຫລວງຫລາຍ
ຂອງມັນ; ແທ້ຈິງແລ້ວ, ຈຳນວນຄົນຕາຍ
ນັ້ນມີຫລາຍທີ່ສຸດ, ທັງຊາວນີໄຟ ແລະ
ຊາວເລມັນ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ນີໄຟໄດ້ໂຍນຄົນຕາຍລົງໄປໃນນ້ຳຊີໂດນ,
ແລະ ມັນໄດ້ໄຫລໄປ ແລະ ຖືກຝັງຢູ່ໃນ
ຄວາມເລິກຂອງທະເລ.
23 ແລະ ກອງທັບຂອງຊາວນີໄຟ ຫລື
ຂອງໂມໂຣໄນ, ໄດ້ກັບຄືນໄປຫາເຮືອນ
ຊານຂອງພວກເຂົາ ແລະ ແຜ່ນດິນຂອງ
ພວກເຂົາ.

15 *ກ* 1 ນຟ 4:37; ແອວ 50:36. | 19 *ກ* ແອວ 47:6. | 20 *ກ* ແອວ 62:16–17.

24 ແລະ ປີທີສິບແປດແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້. ແລະ ບັນທຶກຂອງແອວມາຊຶ່ງ
ມີຂຽນໄວ້ໃນແຜ່ນຈາລຶກຂອງນີໄຟກໍໄດ້
ຈົບລົງດັ່ງນີ້.

---

ເລື່ອງລາວຂອງຜູ້ຄົນຂອງນີໄຟ, ແລະ ລາຍລະອຽດຂອງສົງຄາມ ແລະ ການແຕກແຍກກັນຂອງພວກເຂົາ, ໃນວັນເວລາຂອງຮີລາມັນ, ອີງຕາມບັນທຶກຂອງຮີລາມັນ, ຊຶ່ງເພິ່ນໄດ້ເຮັດໄວ້ໃນວັນເວລາຂອງເພິ່ນ.

*ມີຢູ່ໃນບົດທີ 45 ຈົນເຖິງບົດທີ 62.*

## ບົດທີ 45

*ຮີລາມັນເຊື່ອຄຳເວົ້າຂອງແອວມາ—ແອວມາທຳນາຍເຖິງການທຳລາຍທີ່ຈະມາເຖິງຊາວນີໄຟ—ເພິ່ນໃຫ້ພອນ ແລະ ສາບແຊ່ງແຜ່ນດິນ—ແອວມາອາດຖືກພຣະວິນຍານພາຂຶ້ນໄປເໝືອນກັນກັບໂມເຊ—ການແຕກແຍກເຕີບໂຕຂຶ້ນໃນສາດສະໜາຈັກ. ປະມານ 73 ປີກ່ອນ ຄ.ສ.*

1 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຜູ້ຄົນຂອງນີໄຟມີຄວາມປິຕິຍິນດີຢ່າງ
ຍິ່ງ, ເພາະວ່າພຣະເຈົ້າໄດ້ປົດປ່ອຍພວກ
ເຂົາໃຫ້ພົ້ນຈາກກຳມືຂອງສັດຕູ; ສະນັ້ນ
ພວກເຂົາຈຶ່ງໄດ້ຖວາຍຄວາມຂອບພຣະ
ໄທຕໍ່ອົງພຣະຜູ້ເປັນເຈົ້າຂອງພວກເຂົາ;
ແທ້ຈິງແລ້ວ, ພວກເຂົາໄດ້ *ກ*ຖືສິນອົດເຂົ້າ
ແລະ ອະທິຖານຫລາຍທີ່ສຸດ, ແລະ ພວກ
ເຂົາໄດ້ນະມັດສະການພຣະເຈົ້າດ້ວຍ
ຄວາມຊື່ນຊົມຢ່າງລົ້ນເຫລືອ.
2 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ສິບເກົ້າແຫ່ງການປົກຄອງຂອງຜູ້ຕັດສິນດູ
ແລຜູ້ຄົນຂອງນີໄຟ, ຄື ແອວມາໄດ້ມາຫາ
ຮີລາມັນລູກຊາຍຂອງເພິ່ນ ແລະ ເວົ້າກັບ
ເພິ່ນວ່າ: ລູກເຊື່ອຄຳເວົ້າຊຶ່ງພໍ່ໄດ້ເວົ້າກັບ
ລູກກ່ຽວກັບ *ກ*ບັນທຶກເຫລົ່ານັ້ນ ຊຶ່ງໄດ້ຖືກ
ຮັກສາໄວ້ຕໍ່ໆກັນມາຫລືບໍ່?
3 ແລະ ຮີລາມັນຕອບວ່າ: ແທ້ຈິງແລ້ວ,
ລູກເຊື່ອ.
4 ແລະ ແອວມາຖາມອີກວ່າ: ລູກເຊື່ອໃນ
ພຣະເຢຊູຄຣິດຜູ້ຈະສະເດັດມາບໍ?
5 ແລະ ເພິ່ນຕອບວ່າ: ແທ້ຈິງແລ້ວ, ລູກ
ເຊື່ອຄຳເວົ້າທັງໝົດທີ່ພໍ່ໄດ້ເວົ້າໄວ້.
6 ແລະ ແອວມາຖາມເພິ່ນອີກວ່າ: ລູກຈະ
*ກ*ຮັກສາຄຳສັ່ງຂອງພໍ່ໄດ້ບໍ?
7 ແລະ ເພິ່ນຕອບວ່າ: ແທ້ຈິງແລ້ວ, ລູກ
ຈະຮັກສາຄຳສັ່ງຂອງພໍ່ດ້ວຍສຸດໃຈຂອງ
ລູກ.
8 ຈາກນັ້ນ ແອວມາໄດ້ເວົ້າກັບເພິ່ນອີກ
ວ່າ: ລູກເປັນສຸກແລ້ວ; ແລະ ພຣະຜູ້ເປັນ
ເຈົ້າຈະເຮັດໃຫ້ລູກ *ກ*ຈະເລີນຮຸ່ງເຮືອງຢູ່ໃນ
ແຜ່ນດິນນີ້.
9 ແລະ ຈົ່ງເບິ່ງ, ພໍ່ມີບາງຢ່າງທີ່ຈະ *ກ*ທຳ
ນາຍໃຫ້ລູກ; ແຕ່ອັນໃດກໍຕາມທີ່ພໍ່ທຳນາຍ
ໄວ້ຈະຕ້ອງບໍ່ໃຫ້ຜູ້ໃດຮູ້ຈັກ; ແທ້ຈິງແລ້ວ,
ເລື່ອງທີ່ພໍ່ທຳນາຍໃຫ້ລູກນີ້ຈະຕ້ອງບໍ່ໃຫ້ຜູ້
ໃດຮູ້ຈັກ, ຈົນກວ່າຄຳທຳນາຍນັ້ນຈະເກີດ
ເປັນຈິງເສຍກ່ອນ; ສະນັ້ນ ຈົ່ງຂຽນສິ່ງທີ່ພໍ່
ຈະເວົ້າຕໍ່ໄປນີ້.
10 ແລະ ນີ້ຄືຂໍ້ຄວາມຕ່າງໆ: ຈົ່ງເບິ່ງ,

---

**45** 1 *ກ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
2 *ກ* ແອວ 37:1–5; 50:38.
6 *ກ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ; ພຣະບັນຍັດຂອງພຣະເຈົ້າ.
8 *ກ* 1 ນຟ 4:14; ແອວ 48:15–16, 25.
9 *ກ* ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.

ຕາມວິນຍານແຫ່ງການເປີດເຜີຍອັນມີຢູ່
ກັບພໍ່, ພໍ່ຈຶ່ງຫລິງເຫັນວ່າພາຍໃນ [ກ]ສີ່ຮ້ອຍ
ປີຫລັງຈາກເວລາທີ່ພຣະເຢຊູຄຣິດໄດ້
ສະແດງພຣະອົງເອງໃຫ້ປະຈັກແກ່ຊາວ
ນີໄຟ, ຜູ້ຄົນເຫລົ່ານີ້ຈະເສື່ອມໂຊມຢູ່ໃນ
ຄວາມ [ຂ]ບໍ່ເຊື່ອຖື.
11 ແທ້ຈິງແລ້ວ, ແລະ ເວລານັ້ນ ພວກ
ເຂົາຈະປະສົບກັບສົງຄາມ ແລະ ພະຍາດ
ໂລຄາ, ແທ້ຈິງແລ້ວ, ມັນຈະມີຄວາມອຶດ
ຢາກ ແລະ ການນອງເລືອດເກີດຂຶ້ນ, ຈົນ
ວ່າຜູ້ຄົນຂອງນີໄຟຈະ [ກ]ສູນສິ້ນໄປໝົດ—
12 ແທ້ຈິງແລ້ວ, ແລະ ມັນເປັນເຊັ່ນນີ້ກໍ
ຍ້ອນວ່າພວກເຂົາເສື່ອມໂຊມຢູ່ໃນຄວາມ
ບໍ່ເຊື່ອຖື ແລະ ຕົກໄປສູ່ວຽກງານແຫ່ງ
ຄວາມມືດ, ແລະ [ກ]ກິເລດຕັນຫາ, ແລະ
ຄວາມຊົ່ວຮ້າຍນາໆປະການ; ແທ້ຈິງແລ້ວ,
ພໍ່ກ່າວກັບລູກ ຍ້ອນວ່າພວກເຂົາຈະເຮັດ
ບາບຂັດກັບຄວາມສະຫວ່າງ ແລະ ຄວາມ
ຮູ້ອັນຍິ່ງໃຫຍ່, ແທ້ຈິງແລ້ວ, ພໍ່ກ່າວກັບລູກ,
ວ່ານັບແຕ່ມື້ນັ້ນໄປ, ແມ່ນແຕ່ຄົນລຸ້ນທີສີ່ຈະ
ຍັງບໍ່ຜ່ານໄປໝົດ ກ່ອນທີ່ຄວາມຊົ່ວຮ້າຍ
ອັນໃຫຍ່ຫລວງຈະມາເຖິງ.
13 ແລະ ເມື່ອມື້ສຳຄັນມາເຖິງ, ຈົ່ງເບິ່ງ,
ມັນຈະມາເຖິງຢ່າງວ່ອງໄວທີ່ສຸດສຳລັບຄົນ
ມີຊີວິດຢູ່ໃນປະຈຸບັນນີ້, ຫລື ວ່າລູກຫລານ
ຂອງຄົນທີ່ມີຊີວິດຢູ່ໃນປະຈຸບັນນີ້ ເພາະ
ຜູ້ຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຂອງນີໄຟ,
ຈະບໍ່ຖືກນັບເຂົ້າເປັນຜູ້ຄົນຂອງນີໄຟ [ກ]ອີກ
ເລີຍ.
14 ແລະ ຜູ້ໃດກໍຕາມທີ່ຍັງເຫລືອຢູ່ ຊຶ່ງບໍ່
ໄດ້ຖືກທຳລາຍໃນມື້ອັນຍິ່ງໃຫຍ່ ແລະ ໜ້າ
ຢ້ານກົວນັ້ນ ພວກນັ້ນກໍຈະຖືກ [ກ]ນັບເຂົ້າ
ຢູ່ໃນບັນດາຊາວເລມັນ, ແລະ ຈະກາຍມາ
ເປັນຊາວເລມັນທັງໝົດ ນອກຈາກບໍ່ເທົ່າ
ໃດຄົນຜູ້ທີ່ຈະຖືກເອີ້ນວ່າສານຸສິດຂອງ
ພຣະຜູ້ເປັນເຈົ້າ, ແລະ ຊາວເລມັນຈະໄລ່
ຕາມລ້າ [ຂ]ຈົນວ່າພວກເຂົາສາບສູນໄປ.
ແລະ ບັດນີ້, ເປັນຍ້ອນຄວາມຊົ່ວຮ້າຍນີ້,
ມັນຈຶ່ງຈະເຮັດໃຫ້ຄຳທຳນາຍສຳເລັດ.
15 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ຫລັງຈາກແອວມາໄດ້ກ່າວເລື່ອງເຫລົ່າ
ນີ້ກັບຮີລາມັນແລ້ວ, ເພິ່ນໄດ້ໃຫ້ພອນແກ່ຮີ
ລາມັນ, ແລະ ລູກຊາຍຄົນອື່ນໆຂອງເພິ່ນ;
ແລະ ເພິ່ນໄດ້ໃຫ້ພອນແກ່ໂລກນີ້ອີກ ເພື່ອ
ເຫັນແກ່ [ກ]ຄົນຊອບທຳ.
16 ແລະ ເພິ່ນໄດ້ກ່າວວ່າ: ອົງພຣະຜູ້
ເປັນເຈົ້າໄດ້ກ່າວດັ່ງນີ້—ແຜ່ນດິນຈະຖືກ
[ກ]ສາບແຊ່ງ, ແທ້ຈິງແລ້ວ, ແຜ່ນດິນນີ້, ແກ່
ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ,
ແລະ ທຸກຜູ້ຄົນທັງປວງຊຶ່ງເຮັດຄວາມຊົ່ວ
ໃຫ້ໄປສູ່ຄວາມພິນາດ, ເມື່ອພວກເຂົາສຸກ
ເຕັມທີ່; ແລະ ມັນຈະເປັນໄປດັ່ງນັ້ນ ດັ່ງທີ່
ພໍ່ເວົ້າໄວ້; ເພາະວ່າມັນເປັນການສາບແຊ່ງ
ແລະ [ຂ]ເປັນພອນຂອງພຣະເຈົ້າເທິງແຜ່ນ
ດິນ, ເພາະພຣະຜູ້ເປັນເຈົ້າບໍ່ສາມາດເບິ່ງ
ບາບດ້ວຍລະດັບການຍິນຍອມແມ່ນແຕ່
[ຄ]ໜ້ອຍທີ່ສຸດ.
17 ແລະ ບັດນີ້, ເມື່ອແອວມາກ່າວຂໍ້
ຄວາມນີ້ແລ້ວ ເພິ່ນກໍໃຫ້ພອນແກ່ [ກ]ສາດ
ສະໜາຈັກ, ແທ້ຈິງແລ້ວ, ເພິ່ນໄດ້ໃຫ້ພອນ

10 *ກ* 1 ນຟ 12:10–15; ຮລມ 13:9; ມມ 8:6–7.
*ຂ* ຄນພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື; ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
11 *ກ* ຈຣ 1:10; ມມ 8:2–3, 6–7.
12 *ກ* ຄນພ ກິເລດຕັນຫາ.
13 *ກ* ຮລມ 3:16.
14 *ກ* ມຣນ 9:24.
*ຂ* ມຣນ 1:1–3.
15 *ກ* ແອວ 46:10; 62:40.
16 *ກ* 2 ນຟ 1:7; ແອວ 37:31; ອທ 2:8–12.
*ຂ* ຄພ 130:21.
*ຄ* ຄພ 1:31.
17 *ກ* ຄນພ ສາດສະໜາຈັກ ຂອງພຣະເຢຊູຄຣິດ.

ແກ່ຄົນທັງໝົດຜູ້ທີ່ຍຶດໝັ້ນຢູ່ໃນສັດທາ ນັບ
ແຕ່ເວລານັ້ນເປັນຕົ້ນໄປ.
18 ແລະ ເມື່ອ ແອວມາເຮັດສິ່ງນີ້ແລ້ວ
ເພິ່ນກໍໄດ້ອອກຈາກແຜ່ນດິນເຊຣາເຮັມລາ
ໄປ, ຄ້າຍຄືກັບວ່າເພິ່ນຈະໄປຫາແຜ່ນດິນ
ມີເລັກ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ບໍ່ມີຜູ້ໃດໄດ້ຍິນເລື່ອງຂອງເພິ່ນອີກຕໍ່ໄປ
ເລີຍ; ແລະ ພວກເຮົາບໍ່ຮູ້ກ່ຽວກັບການຕາຍ
ຫລື ການຝັງສົບຂອງເພິ່ນເລີຍ.
19 ຈົ່ງ ເບິ່ງ, ພວກເຮົາຮູ້ຈັກວ່າ ເພິ່ນ
ເປັນຄົນຊອບທຳ; ແລະ ມີຂ່າວລືໄປທົ່ວ
ສາດສະໜາຈັກວ່າ ພຣະວິນຍານໄດ້ຮັບ
ເອົາເພິ່ນຂຶ້ນໄປ ຫລື [ກ]ຖືກຝັງໂດຍພຣະ
ຫັດຂອງພຣະຜູ້ເປັນເຈົ້າເໝືອນດັ່ງໂມເຊ.
ແຕ່ຈົ່ງເບິ່ງ, ພຣະຄຳພີໄດ້ກ່າວວ່າ ພຣະຜູ້
ເປັນເຈົ້າໄດ້ເອົາໂມເຊໄປຢູ່ກັບພຣະອົງ;
ແລະ ພວກເຮົາຄິດວ່າພຣະອົງໄດ້ຮັບເອົາ
ແອວມາ ໄປໃນວິນຍານໄວ້ກັບພຣະອົງຄື
ກັນ; ສະນັ້ນ ເພາະເຫດນີ້, ພວກເຮົາຈຶ່ງບໍ່ຮູ້
ຫຍັງເລີຍກ່ຽວກັບການຕາຍ ແລະ ການຝັງ
ຂອງເພິ່ນ.
20 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ໃນຕົ້ນປີທີສິບເກົ້າແຫ່ງການປົກຄອງຂອງ
ຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ຮີລາມັນໄດ້
ອອກໄປໃນບັນດາຜູ້ຄົນເພື່ອປະກາດພຣະ
ຄຳຕໍ່ພວກເຂົາ.
21 ເພາະ ຈົ່ງ ເບິ່ງ, ເນື່ອງ ຈາກ ວ່າ ພວກ
ເຂົາໄດ້ມີສົງຄາມກັບຊາວເລມັນ ແລະ ມີ
ຄວາມຫຍຸ້ງຍາກເລັກໜ້ອຍຫລາຍເທື່ອ
ແລະ ມີການ ແຕກ ແຍກກັນໃນ ບັນດາຜູ້
ຄົນ, ມັນຈຶ່ງສົມຄວນທີ່ຈະປະກາດ [ກ]ພຣະ
ຄຳຂອງພຣະເຈົ້າຕໍ່ພວກເຂົາ, ແທ້ຈິງແລ້ວ,
ມັນສົມຄວນທີ່ຈະຈັດຕັ້ງຂໍ້ບັງຄັບຂຶ້ນທົ່ວ
ສາດສະໜາຈັກ.
22 ສະນັ້ນ, ຮີລາມັນ ແລະ ພີ່ນ້ອງຂອງ
ເພິ່ນ ຈຶ່ງ ໄດ້ອອກໄປທົ່ວ ແຜ່ນດິນ ເພື່ອ
ສະຖາປະນາສາດສະໜາຈັກຂຶ້ນໃໝ່, ແທ້
ຈິງແລ້ວ, ພວກເຂົາໄດ້ສະຖາປະນາສາດ
ສະໜາຈັກຂຶ້ນໃນທຸກຫົວເມືອງຕະຫລອດ
ແຜ່ນດິນ ຊຶ່ງຜູ້ຄົນຂອງນີໄຟເປັນເຈົ້າຂອງ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາ
ເຫລົ່ານັ້ນໄດ້ແຕ່ງຕັ້ງປະໂລຫິດ ແລະ ຜູ້
ສອນໄວ້ທົ່ວແຜ່ນດິນ, ເພື່ອດູແລສາດສະ
ໜາຈັກທຸກບ່ອນ.
23 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກຮີລາມັນ ແລະ ພີ່ນ້ອງຂອງເພິ່ນ
ໄດ້ແຕ່ງຕັ້ງປະໂລຫິດ ແລະ ຜູ້ສອນ ເພື່ອ
ດູແລສາດສະໜາຈັກແລ້ວ, ມັນມີ [ກ]ການ
ແຕກແຍກກັນໃນບັນດາຜູ້ຄົນ ແລະ ພວກ
ເຂົາບໍ່ຍອມເອົາໃຈໃສ່ໃນຄຳເວົ້າຂອງຮີລາ
ມັນ ແລະ ພີ່ນ້ອງຂອງເພິ່ນເລີຍ;
24 ແຕ່ພວກເຂົາກັບມາອວດດີ, ໂດຍທີ່
ລະເມີເພີ້ຝັນດ້ວຍຄວາມທະນົງໃຈ, ເພາະ
[ກ]ຄວາມຮັ່ງມີເປັນດີຢ່າງຍິ່ງຂອງພວກເຂົາ;
ສະນັ້ນ ພວກເຂົາຈຶ່ງຮັ່ງມີເປັນດີຢ່າງຍິ່ງໃນ
ສາຍຕາ [ຂ]ຂອງຕົນເອງ, ແລະ ບໍ່ຍອມເອົາ
ໃຈໃສ່ຄຳເວົ້າຂອງພວກເພິ່ນ, ເພື່ອເດີນໄປ
ຢ່າງພາກພູມໃຈຕໍ່ພຣະພັກຂອງພຣະເຈົ້າ.

## ບົດທີ 46

*ອະມາລີໄຄຢາກະບົດຢາກຈະເປັນກະສັດ—ໂມໂຣໄນຍົກປ້າຍແຫ່ງເສລີພາບຂຶ້ນ—ເພິ່ນຊຸມນຸມກັບຜູ້ຄົນເພື່ອໃຫ້ປ້ອງກັນສາດສະໜາຂອງພວກເຂົາ—ຜູ້ເຊື່ອຖືຢ່າງຈິງໃຈຖືກເອີ້ນວ່າຄຣິດສະຕຽນ—ເຊື້ອ*

19 *ກ* ຄມພ ບຸກຄົນທີ່ຖືກ
ປ່ຽນສະພາບແລ້ວ.
21 *ກ* ແອວ 31:5.
23 *ກ* 3 ນຟ 11:28–29.
24 *ກ* ຄມພ ຮັ່ງມີ, ຄວາມຮັ່ງມີ.
*ຂ* ຄມພ ຈອງຫອງ,
ຄວາມຈອງຫອງ.

*ສາຍຂອງໂຢເຊັບທີ່ເຫລືອຢູ່ຈະຖືກປົກປັກຮັກສາໄວ້—ອະມາລີໄຄຢາ ແລະ ຜູ້ທີ່ແຍກອອກໄປນັ້ນໜີໄປຫາແຜ່ນດິນນີໄຟ—ຜູ້ທີ່ບໍ່ອູ້ມຊູອຸດົມການແຫ່ງອິດສະລະພາບຖືກປະຫານຊີວິດ. ປະມານ 73–72 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນມີຜູ້ຄົນເປັນຈຳນວນຫລວງຫລາຍທີ່ບໍ່ເຊື່ອຟັງຄຳເວົ້າຂອງຮີລາມັນ ແລະ ພີ່ນ້ອງຂອງເພິ່ນ ແລ້ວພວກເຂົາກໍໄດ້ເຕົ້າໂຮມກັນເພື່ອຕໍ່ຕ້ານພີ່ນ້ອງຂອງຕົນ.

2 ແລະ ບັດນີ້ຈົ່ງເບິ່ງ, ຜູ້ຄົນເຫລົ່ານີ້ມີຄວາມຄຽດແຄ້ນຫລາຍທີ່ສຸດ, ເຖິງຂະໜາດທີ່ພວກເຂົາຕັ້ງໃຈວ່າ ຈະຂ້າຮີລາມັນ ແລະ ພີ່ນ້ອງຂອງເພິ່ນຖິ້ມເສຍ.

3 ບັດນີ້ຫົວໜ້າຂອງພວກທີ່ຄຽດແຄ້ນພີ່ນ້ອງຂອງພວກເຂົາເປັນຊາຍທີ່ມີຮ່າງກາຍສູງໃຫຍ່ ແລະ ແຂງແຮງທີ່ສຸດ; ແລະ ລາວມີຊື່ວ່າ ອະມາລີໄຄຢາ.

4 ແລະ ອະມາລີໄຄຢາປາດຖະໜາຈະເປັນກະສັດ; ແລະ ຜູ້ຄົນທີ່ຄຽດແຄ້ນກໍຢາກໃຫ້ລາວເປັນກະສັດຂອງຕົນ; ແລະ ພວກເຂົາສ່ວນຫລາຍກໍເປັນ [ກ]ຜູ້ຕັດສິນຊັ້ນຕົ້ນຂອງແຜ່ນດິນ, ແລະ ພວກເຂົາກຳລັງສະແຫວງຫາອຳນາດ.

5 ແລະ ພວກເຂົາຖືກຊັກຊວນດ້ວຍຄຳຍົກຍ້ອງຂອງອະມາລີໄຄຢາ, ວ່າຖ້າຫາກພວກເຂົາສະໜັບສະໜູນລາວ ແລະ ຍົກລາວຂຶ້ນເປັນກະສັດແລ້ວ ລາວຈະເຮັດໃຫ້ພວກເຂົາເປັນຜູ້ປົກຄອງຜູ້ຄົນ.

6 ພວກເຂົາຈຶ່ງໄດ້ຖືກອະມາລີໄຄຢາຊັກຊວນໄປຫາການແຕກແຍກດັ່ງນີ້, ທັງໆທີ່ມີຄຳສັ່ງສອນຂອງຮີລາມັນ ແລະ ພີ່ນ້ອງຂອງເພິ່ນຢູ່, ແທ້ຈິງແລ້ວ, ທັງໆທີ່ຄົນເຫລົ່ານີ້ເຄີຍເອົາໃຈໃສ່ດູແລສາດສະໜາຈັກຫລາຍທີ່ສຸດມາກ່ອນ, ເພາະວ່າພວກເຂົາເຄີຍເປັນມະຫາປະໂລຫິດດູແລສາດສະໜາຈັກ.

7 ແລະ ມີຫລາຍຄົນໃນສາດສະໜາຈັກເຊື່ອໃນຄຳຍົກຍ້ອງຂອງອະມາລີໄຄຢາ, ສະນັ້ນພວກເຂົາຈຶ່ງໄດ້ແຍກອອກໄປຈາກສາດສະໜາຈັກ; ແລະ ການງານຂອງຜູ້ຄົນຂອງນີໄຟນັ້ນຈຶ່ງບໍ່ແນ່ນອນ ແລະ ເປັນອັນຕະລາຍຫລາຍທີ່ສຸດດັ່ງນີ້, ທັງໆທີ່ພວກເຂົາໄດ້ຮັບ [ກ]ໄຊຊະນະອັນໃຫຍ່ຫລວງມາຈາກຊາວເລມັນ, ແລະ ພວກເຂົາມີຄວາມປິຕິຍິນດີທີ່ໄດ້ຮັບໄຊຊະນະ ຍ້ອນການປົດປ່ອຍພວກເຂົາໂດຍພຣະຫັດຂອງພຣະຜູ້ເປັນເຈົ້າ.

8 ພວກເຮົາຈຶ່ງເຫັນໄດ້ວ່າ ລູກຫລານມະນຸດຫລົງລືມພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາໄດ້ຢ່າງ [ກ]ວ່ອງໄວ, ແທ້ຈິງແລ້ວ, ພວກເຂົາກະທຳຄວາມຊົ່ວຮ້າຍ ແລະ ຖືກຊັກຊວນໄປຫາມານຮ້າຍໄດ້ຢ່າງວ່ອງໄວພຽງໃດ.

9 ແທ້ຈິງແລ້ວ, ແລະ ພວກເຮົາກໍເຫັນໄດ້ອີກວ່າ ຄົນຊົ່ວຄົນໜຶ່ງສາມາດເຮັດໃຫ້ [ກ]ຄວາມຊົ່ວຮ້າຍອັນໃຫຍ່ຫລວງເກີດຂຶ້ນໄດ້ໃນບັນດາລູກຫລານມະນຸດ.

10 ແທ້ຈິງແລ້ວ, ພວກເຮົາເຫັນໄດ້ວ່າ ອະມາລີໄຄຢາ ເພາະລາວເປັນຄົນທີ່ມີເລ່ຫລ່ຽມ ແລະ ເປັນຄົນໃຊ້ຄຳຍົກຍ້ອງຫລາຍ, ເພື່ອລາວຈະໄດ້ຊັກນຳໃຈຂອງຜູ້ຄົນຢ່າງຫລວງຫລາຍໃຫ້ເຮັດຄວາມຊົ່ວ; ແທ້ຈິງແລ້ວ, ແລະ ເພື່ອພະຍາຍາມທຳລາຍສາດສະໜາຈັກຂອງພຣະເຈົ້າ, ເພື່ອທຳລາຍຮາກຖານແຫ່ງ [ກ]ເສລີພາບຊຶ່ງ

**46** 4*ກ* ມຊຢ 29:11, 28–29.
7*ກ* ແອວ 44:19–20.
8*ກ* ຮລມ 12:2, 4–5.
9*ກ* ມຊຢ 29:17–18.
10*ກ* 2 ນຟ 1:7; ມຊຢ 29:32.

ພຣະເຈົ້າໄດ້ປະທານໃຫ້ແກ່ພວກເຂົາ, ຫລື
ພອນທີ່ພຣະເຈົ້າໄດ້ສົ່ງມາເທິງຜືນແຜ່ນດິນ
ເພື່ອເຫັນແກ່ [ຂ]ຄົນຊອບທຳ.
11 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເວລາໂມໂຣໄນ, ຜູ້ຊຶ່ງເປັນ [ກ]ຫົວໜ້າບັງຄັບ
ບັນຊາກອງທັບຂອງຊາວນີໄຟໄດ້ຍິນເຖິງ
ການແຕກແຍກເຫລົ່ານີ້, ເພິ່ນກໍຄຽດແຄ້ນ
ໃຫ້ອະມາລີໄຄຢາ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ສີກເສື້ອຂອງເພິ່ນອອກ, ແລະ ເພິ່ນໄດ້
ຂຽນໃສ່ຕ່ອນທີ່ສີກອອກມານັ້ນ—[ກ]ເພື່ອ
ມັນຈະໄດ້ເປັນທີ່ລະນຶກເຖິງພຣະເຈົ້າຂອງ
ພວກເຮົາ, ສາດສະໜາຂອງພວກເຮົາ,
ແລະ ອິດສະລະພາບຂອງພວກເຮົາ, ແລະ
ສັນຕິສຸກຂອງພວກເຮົາ, ແລະ ເມຍຂອງ
ພວກເຮົາ, ແລະ ລູກຂອງພວກເຮົາ—ແລະ
ເພິ່ນໄດ້ມັດຜ້າຕ່ອນນັ້ນໄວ້ເທິງສົ້ນໄມ້.
13 ແລະ ເພິ່ນໄດ້ໃສ່ເຄື່ອງກັນຫົວຂອງ
ເພິ່ນ, ແລະ ແຜ່ນປົກເອິກຂອງເພິ່ນ, ແລະ
ເຄື່ອງປ້ອງກັນຂອງເພິ່ນ, ແລະ ເພິ່ນໄດ້
ຮັດເຄື່ອງປ້ອງກັນໄວ້ຮອບແອວຂອງເພິ່ນ;
ແລະ ເພິ່ນໄດ້ຈັບເອົາໄມ້ທີ່ມີໜັງສືຂຽນໄວ້
ໃນຕ່ອນເສື້ອທີ່ສີກອອກນັ້ນ, (ແລະ ເພິ່ນ
ເອີ້ນມັນວ່າ ປ້າຍແຫ່ງເສລີພາບ) ແລະ
ເພິ່ນກົ້ມຂາບລົງພື້ນດິນ ແລະ ອະທິຖານ
ຫາພຣະເຈົ້າຂອງເພິ່ນຢ່າງສຸດກຳລັງ ຂໍໃຫ້
ພອນແຫ່ງເສລີພາບມາສະຖິດຢູ່ກັບພີ່ນ້ອງ
ຂອງເພິ່ນ, ຕາບໃດທີ່ກຸ່ມຄຣິດສະຕຽນຍັງ
ເຫລືອຢູ່ເພື່ອວ່າຈະໄດ້ເປັນເຈົ້າຂອງແຜ່ນ
ດິນ—
14 ເພາະຜູ້ທີ່ບໍ່ໄດ້ເປັນຂອງສາດສະໜາ
ຈັກໄດ້ເອີ້ນຜູ້ທີ່ເປັນສະມາຊິກຂອງສາດ
ສະໜາຈັກຂອງພຣະເຈົ້າ ຜູ້ທີ່ເຊື່ອຢ່າງແທ້
ຈິງຂອງພຣະຄຣິດດັ່ງນັ້ນ.
15 ແລະ ຜູ້ທີ່ໄດ້ເປັນສະມາຊິກຂອງສາດ
ສະໜາຈັກນັ້ນກໍຊື່ສັດແທ້ໆ; ແທ້ຈິງແລ້ວ,
ທຸກຄົນທີ່ເຊື່ອຖືຢ່າງແທ້ຈິງໃນພຣະຄຣິດ
ກໍໄດ້ຍອມຮັບເອົາ [ກ]ພຣະນາມຂອງພຣະ
ຄຣິດດ້ວຍຄວາມຍິນດີ, ແລະ ພວກເຂົາຖືກ
ເອີ້ນວ່າ [ຂ]ຄຣິດສະຕຽນ, ຍ້ອນຄວາມເຊື່ອ
ຖືຂອງພວກເຂົາໃນພຣະຄຣິດອົງທີ່ຈະສະ
ເດັດມາ.
16 ແລະ ສະນັ້ນ, ໃນເວລານີ້, ໂມໂຣໄນ
ໄດ້ອະທິຖານເພື່ອອຸດົມການຂອງຄຣິດສະ
ຕຽນ, ແລະ ອິດສະລະພາບຂອງແຜ່ນດິນ
ທີ່ຈະໄດ້ເປັນທີ່ຊົງໂປດ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ເພິ່ນທຸ້ມເທຈິດວິນຍານຕໍ່ພຣະເຈົ້າແລ້ວ,
ເພິ່ນຈຶ່ງໄດ້ຕັ້ງຊື່ແຜ່ນດິນທັງໝົດ ຊຶ່ງຢູ່ທາງ
ໃຕ້ຂອງ [ກ]ແຜ່ນດິນຮ້າງ, ແທ້ຈິງແລ້ວ, ແລະ
ໂດຍສະຫລຸບ, ທັງແຜ່ນດິນທັງໝົດທັງທາງ
ເໜືອ ແລະ ທາງໃຕ້—ຊຶ່ງເປັນແຜ່ນດິນທີ່
ຖືກເລືອກໄວ້, ແລະ ເປັນແຜ່ນດິນແຫ່ງເສ
ລີພາບ.
18 ແລະ ເພິ່ນເວົ້າວ່າ: ແນ່ນອນທີ່ສຸດ
ພຣະເຈົ້າຈະບໍ່ຍອມໃຫ້ພວກເຮົາຜູ້ຖືກດູ
ໝິ່ນ ເພາະ ພວກເຮົາຍອມຮັບເອົາພຣະ
ນາມຂອງພຣະຄຣິດ ຖືກຢຽບຍ່ຳ ແລະ
ຖືກທຳລາຍ, ເວັ້ນເສຍແຕ່ພວກເຮົາຈະນຳ
ມັນມາສູ່ຕົວພວກເຮົາເອງ ໂດຍການລ່ວງ
ລະເມີດຂອງພວກເຮົາ.
19 ແລະ ເມື່ອໂມໂຣໄນກ່າວຂໍ້ຄວາມນີ້
ແລ້ວ, ເພິ່ນກໍໄດ້ອອກໄປໃນບັນດາຜູ້ຄົນ
ແລະ ເຍິງໄມ້ທີ່ມີຕ່ອນຜ້າທີ່ສີກອອກຈາກ
[ກ]ເສື້ອຂອງເພິ່ນຂຶ້ນໃນອາກາດ, ເພື່ອຈະ
ໄດ້ໃຫ້ທຸກຄົນເຫັນຂໍ້ຄວາມທີ່ເພິ່ນໄດ້ຂຽນ

10 *ຂ* 2 ນຟ 1:7.
11 *ກ* ແອວ 43:16–17.
12 *ກ* ນມຢ 4:14;
ແອວ 44:5.
15 *ກ* ມຊຢ 5:7–9.
*ຂ* ກຈກ 11:26;
1 ປຕ 4:16.
17 *ກ* ແອວ 22:30–31.
19 *ກ* ຄມພ ປ້າຍສັນຍານ.

ໄວ້ໃນຜ້າຕ່ອນນັ້ນ, ແລະ ເພິ່ນຮ້ອງອອກ
ມາດ້ວຍສຽງອັນດັງວ່າ:
20 ຈົ່ງ ເບິ່ງ, ຜູ້ໃດກໍຕາມທີ່ຈະຮັກສາຂໍ້
ຄວາມນີ້, ກໍຂໍໃຫ້ອອກມາດ້ວຍພະລັງຂອງ
ພຣະຜູ້ເປັນເຈົ້າ, ແລະ ເຂົ້າເຮັດພັນທະສັນ
ຍາ ວ່າຕົນຈະຮັກສາສິດທິໄວ້ ແລະ ຮັກສາ
ສິດທິຂອງສາດສະໜາໄວ້, ເພື່ອອົງພຣະຜູ້
ເປັນເຈົ້າຈະໄດ້ປະທານພອນໃຫ້ແກ່ຕົນ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ໂມໂຣໄນປະກາດຂໍ້ຄວາມນີ້ແລ້ວ, ຈົ່ງເບິ່ງ,
ຜູ້ຄົນໄດ້ພາກັນແລ່ນອອກມາພ້ອມດ້ວຍ
ເຄື່ອງປ້ອງກັນຕິດຢູ່ອ້ອມແອວ, ສີກເອົາ
ເສື້ອຜ້າຂອງຕົນອອກມາເປັນເຄື່ອງໝາຍ,
ຫລື ເປັນພັນທະສັນຍາວ່າ ພວກເຂົາຈະບໍ່
ປະປ່ອຍພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ; ຫລື ອີກຄຳໜຶ່ງ, ຖ້າຫາກ
ພວກເຂົາລ່ວງລະເມີດພຣະບັນຍັດຂອງ
ພຣະເຈົ້າ, ຫລື ຕົກໄປສູ່ການລ່ວງລະເມີດ,
ແລະ [ກ]ລະອາຍໃຈທີ່ຍອມຮັບພຣະນາມ
ຂອງພຣະຄຣິດແລ້ວ, ກໍຂໍໃຫ້ພຣະຜູ້ເປັນ
ເຈົ້າສີກພວກເຂົາໃຫ້ຄືກັນກັບເສື້ອຜ້າຂອງ
ພວກເຂົານັ້ນ.
22 ບັດນີ້ ນີ້ຄືພັນທະສັນຍາທີ່ພວກເຂົາ
ໄດ້ເຮັດໄວ້, ແລະ ພວກເຂົາໂຍນເສື້ອຜ້າ
ຂອງພວກເຂົາໄວ້ທີ່ຕີນຂອງ ໂມໂຣໄນ,
ກ່າວວ່າ: ພວກເຮົາຂໍເຮັດພັນທະສັນຍາ
ກັບພຣະເຈົ້າຂອງພວກເຮົາ, ວ່າຖ້າຫາກ
ພວກເຮົາຕົກໄປສູ່ການລ່ວງລະເມີດ, ຂໍໃຫ້
ພວກເຮົາຈົ່ງຖືກທຳລາຍຄືກັນກັບພີ່ນ້ອງ
ຂອງພວກເຮົາທີ່ຢູ່ໃນແຜ່ນດິນທາງເໜືອ;
ແທ້ຈິງແລ້ວ, ຖ້າຫາກພວກເຮົາຕົກໄປສູ່
ການລ່ວງລະເມີດ ກໍຂໍໃຫ້ພຣະອົງຈົ່ງໂຍນ
ພວກເຮົາລົງຢູ່ພື້ນຕີນຂອງສັດຕູເໝືອນດັ່ງ
ທີ່ພວກເຮົາໄດ້ໂຍນເສື້ອຜ້າຂອງພວກເຮົາ
ລົງທີ່ຕີນຂອງທ່ານ.
23 ໂມໂຣໄນໄດ້ກ່າວກັບພວກເຂົາວ່າ:
ຈົ່ງເບິ່ງ, ພວກເຮົາເປັນສ່ວນໜຶ່ງທີ່ເຫລືອຢູ່
ຂອງເຊື້ອສາຍຂອງຢາໂຄບ; ແທ້ຈິງແລ້ວ,
ພວກເຮົາເປັນສ່ວນໜຶ່ງທີ່ເຫລືອຢູ່ຂອງ
[ກ]ເຊື້ອສາຍຂອງ [ຂ]ໂຢເຊັບ, ຊຶ່ງ [ຄ]ເສື້ອຜ້າ
ຂອງເພິ່ນຖືກອ້າຍນ້ອງຂອງເພິ່ນສີກອອກ
ເປັນຕ່ອນໆ; ແທ້ຈິງແລ້ວ, ແລະ ບັດນີ້ຈົ່ງ
ເບິ່ງ, ຂໍໃຫ້ພວກເຮົາຈື່ຈຳ ແລະ ຮັກສາ
ພຣະບັນຍັດຂອງພຣະເຈົ້າໄວ້, ຖ້າບໍ່ດັ່ງນັ້ນ
ເສື້ອຜ້າຂອງພວກເຮົາຈະຖືກພີ່ນ້ອງຂອງ
ພວກເຮົາສີກຖິ້ມ, ແລະ ພວກເຮົາຈະຖືກ
ເອົາເຂົ້າຄຸກ, ຫລື ວ່າຖືກຂາຍ, ຫລື ຖືກຂ້າ
ຕາຍ.
24 ແທ້ຈິງແລ້ວ, ຂໍໃຫ້ພວກເຮົາຈົ່ງປົກ
ປັກຮັກສາເສລີພາບຂອງພວກເຮົາໄວ້ໃນ
ຖານະທີ່ເປັນສ່ວນໜຶ່ງທີ່ [ກ]ເຫລືອຢູ່ຂອງ
ໂຢເຊັບ; ແທ້ຈິງແລ້ວ, ຂໍໃຫ້ພວກເຮົາຈົ່ງ
ຈື່ຈຳຄຳເວົ້າຂອງຢາໂຄບກ່ອນທີ່ເພິ່ນຈະ
ຕາຍຈາກໄປ, ເພາະຈົ່ງເບິ່ງ, ເພິ່ນໄດ້ຮັກ
ສາເສື້ອສ່ວນທີ່ເຫລືອຢູ່ຂອງໂຢເຊັບໄວ້
ໂດຍບໍ່ໃຫ້ມັນເນົ່າເປື່ອຍ. ແລະ ເພິ່ນໄດ້
ກ່າວວ່າ—ເສື້ອສ່ວນທີ່ເຫລືອຢູ່ຂອງລູກ
ຂອງຂ້າພະເຈົ້າໄດ້ຮັບການປົກປັກຮັກສາ
ໄວ້ສັນໃດ, ສ່ວນໜຶ່ງທີ່ເຫລືອຢູ່ຂອງລູກ
ຂອງຂ້າພະເຈົ້າກໍຈະໄດ້ຮັບການປົກປັກ
ຮັກສາໄວ້ໂດຍພຣະຫັດຂອງພຣະເຈົ້າສັນ
ນັ້ນ, ແລະ ພວກເຂົາຈະຖືກນຳກັບຄືນໄປ
ຫາພຣະອົງ, ຂະນະທີ່ສ່ວນໜຶ່ງຂອງລູກ
ຫລານຂອງໂຢເຊັບທີ່ [ຂ]ເຫລືອຢູ່ນັ້ນຈະ

21 ກ 1 ນຟ 8:25–28; ມມ 8:38.
23 ກ ປຖກ 49:22–26; 1 ນຟ 5:14–15.
ຂ ຄມພ ໂຢເຊັບ, ລູກຊາຍຂອງຢາໂຄບ.
ຄ ປຖກ 37:3, 31–36.
24 ກ ອມ 5:15; 3 ນຟ 5:21–24; 10:17.
ຂ 2 ນຟ 3:5–24; ອທ 13:6–7.

ຕາຍ, ດັ່ງເຊັ່ນການເນົ່າເປື່ອຍຂອງເສື້ອຜ້າ
ຂອງໂຢເຊັບນັ້ນ.
25 ບັດນີ້ຈົ່ງເບິ່ງ, ເລື່ອງນີ້ໄດ້ເຮັດໃຫ້ຈິດ
ວິນຍານຂອງຂ້າພະເຈົ້າເສົ້າສະຫລົດໃຈ
ຫລາຍ; ເຖິງຢ່າງໃດກໍຕາມ, ຈິດວິນຍານ
ຂອງຂ້າພະເຈົ້າກໍຍັງມີຄວາມສຸກກັບລູກ
ຊາຍຂອງຂ້າພະເຈົ້າ, ຍ້ອນວ່າຜູ້ສືບເຊື້ອ
ສາຍສ່ວນນັ້ນຂອງລາວຈະຖືກນຳກັບຄືນ
ໄປຫາພຣະເຈົ້າ.
26 ບັດ ນີ້ ຈົ່ງ ເບິ່ງ, ນີ້ ເປັນ ຄຳ ເວົ້າ ຂອງ
ຢາໂຄບ.
27 ແລະ ບັດນີ້ຈະມີຜູ້ໃດຮູ້ໄດ້ວ່າ ຜູ້ທີ່
ໄດ້ແຍກອອກໄປຈາກພວກເຮົານັ້ນແມ່ນຜູ້
ສືບເຊື້ອສາຍທີ່ເຫລືອຢູ່ຂອງໂຢເຊັບ, ທີ່ຈະ
ຕາຍຄືກັນກັບການເນົ່າເປື່ອຍຂອງເສື້ອຜ້າ
ຂອງເພິ່ນ? ແທ້ຈິງແລ້ວ, ແລະ ມັນອາດຈະ
ເປັນຕົວພວກເຮົາເອງ ຖ້າຫາກພວກເຮົາບໍ່
ຍຶດໝັ້ນຢູ່ໃນສັດທາຂອງພຣະຄຣິດ.
28 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເວລາໂມໂຣໄນກ່າວຂໍ້ຄວາມນີ້ແລ້ວ, ເພິ່ນ
ກໍອອກໄປ ແລະ ອອກຄຳສັ່ງໄປຫາທຸກ
ພາກສ່ວນຂອງແຜ່ນດິນທີ່ມີຄວາມແຕກ
ແຍກກັນ, ແລະ ໃຫ້ພວກເຂົາເຕົ້າໂຮມຜູ້
ຄົນທັງໝົດທີ່ປາດຖະໜາຈະຮັກສາເສລີ
ພາບຂອງຕົນ, ເພື່ອໃຫ້ຕໍ່ສູ້ກັບອະມາລີໄຄ
ຢາ ແລະ ພວກທີ່ໄດ້ແຍກອອກໄປນັ້ນຖືກ
ເອີ້ນວ່າຊາວອະມາລີໄຄຢາ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເມື່ອອະມາລີໄຄຢາເຫັນວ່າຜູ້ຄົນຂອງໂມ
ໂຣໄນມີຈຳນວນຫລາຍກວ່າຊາວອະມາລີ
ໄຄຢາ—ແລະ ລາວເຫັນອີກວ່າຜູ້ຄົນຂອງ
ລາວມີຄວາມສົງໃສຢູ່ກ່ຽວກັບຄວາມຍຸດ
ຕິທຳຂອງອຸດົມການທີ່ພວກເຂົາຮັບໄວ້—
ສະນັ້ນ, ເມື່ອອະມາລີໄຄຢາຢ້ານກົວວ່າຕົນ
ຈະເອົາຊະນະຊາວນີໄຟບໍ່ໄດ້, ລາວຈຶ່ງໄດ້
ນຳເອົາຜູ້ຄົນສ່ວນໜຶ່ງ ແລະ ອອກໄປຫາ
ແຜ່ນດິນນີໄຟ.
30 ບັດນີ້ໂມໂຣໄນຄິດວ່າມັນບໍ່ເປັນການ
ສົມຄວນທີ່ຊາວເລມັນຈະມີກຳລັງເພີ່ມເຕີມ
ຂຶ້ນອີກ; ສະນັ້ນ ເພິ່ນຈຶ່ງຄິດຈະຕັດຈຳນວນ
ຄົນຂອງອະມາລີໄຄຢາລົງ, ຫລື ເອົາພວກ
ເຂົາເຫລົ່ານັ້ນກັບຄືນມາ, ແລະ ຂ້າອະມາ
ລີໄຄຢາຖິ້ມເສຍ; ແທ້ຈິງແລ້ວ, ເພາະເພິ່ນ
ຮູ້ວ່າອະມາລີໄຄຢາຈະຍຸຍົງໃຫ້ຊາວເລມັນ
ຄຽດແຄ້ນໃຫ້ເຂົາເຈົ້າ, ແລະ ເພິ່ນຮູ້ວ່າອະ
ມາລີໄຄຢາຈະເຮັດໄປເພື່ອລາວຈະໄດ້ບັນ
ລຸຈຸດປະສົງຂອງລາວ.
31 ສະນັ້ນ ໂມໂຣໄນຄິດວ່າມັນສົມຄວນ
ທີ່ເພິ່ນຈະນຳເອົາກອງທັບຂອງເພິ່ນ, ຊຶ່ງ
ຕຽມພ້ອມຢູ່ແລ້ວ, ແລະ ມີອາວຸດຢ່າງພ້ອມ
ພຽງ, ແລະ ເຂົ້າເຮັດພັນທະສັນຍາເພື່ອ
ຈະໄດ້ຮັກສາສັນຕິພາບ—ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ເພິ່ນໄດ້ນຳກອງທັບຂອງ
ເພິ່ນ ແລະ ໄດ້ອອກເດີນທັບໄປໃນຖິ່ນແຫ້ງ
ແລ້ງກັນດານ ເພື່ອຕັດທາງຂອງອະມາລີ
ໄຄຢາເສຍ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ເຮັດໄປຕາມຄວາມປາດຖະໜາຂອງ
ເພິ່ນ, ແລະ ເດີນທັບເຂົ້າໄປໃນຖິ່ນແຫ້ງ
ແລ້ງກັນດານ, ແລະ ໄດ້ສະກັດກອງທັບ
ຂອງອະມາລີໄຄຢາໄວ້.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະ
ມາລີໄຄຢາໄດ້ປົບໜີໄປກັບຜູ້ຄົນສ່ວນ
ໜ້ອຍໜຶ່ງຂອງລາວ, ແລະ ພວກທີ່ເຫລືອຢູ່
ກໍໄດ້ມອບຕົວໃຫ້ຢູ່ໃນກຳມືຂອງໂມໂຣໄນ
ແລະ ຖືກນຳກັບຄືນໄປຫາແຜ່ນດິນເຊຣາ
ເຮັມລາ.
34 ບັດນີ້, ໂມໂຣໄນໂດຍທີ່ໄດ້ຖືກ [ກ]ແຕ່ງ

34 *ກ* ແອວ 43:16.

ຕັ້ງ ໂດຍ ຫົວໜ້າຜູ້ຕັດສິນ ແລະ ໂດຍສຽງ
ຂອງປະຊາຊົນ, ສະນັ້ນ ເພິ່ນຈຶ່ງມີອຳນາດ
ທີ່ຈະຈັດການຕາມຄວາມປະສົງຂອງເພິ່ນ
ກັບກອງທັບຂອງຊາວນີໄຟ, ທີ່ຈະສະຖາ
ປະນາ ແລະ ໃຊ້ສິດອຳນາດປົກຄອງພວກ
ເຂົາ.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ໃດກໍຕາມທີ່ເປັນຊາວອະມາລິໄຄຢາທີ່ບໍ່
ຍອມເຂົ້າເຮັດພັນທະສັນຍາເພື່ອສະໜັບ
ສະໜູນອຸດົມການ ແຫ່ງອິດສະລະພາບ,
ເພື່ອຈະໄດ້ດຳລົງຮັກສາການປົກຄອງອັນ
ເປັນອິດສະລະພາບໄວ້, ເພິ່ນກໍສັ່ງໃຫ້ຂ້າ
ຄົນນັ້ນຖິ້ມເສຍ; ແລະ ມັນມີຄົນພຽງໜ້ອຍ
ດຽວເທົ່ານັ້ນທີ່ປະຕິເສດພັນທະສັນຍາ
ແຫ່ງອິດສະລະພາບນີ້.
36 ແລະ ເຫດການໄດ້ບັງເກີດຂຶ້ນອີກ,
ຄືເພິ່ນໄດ້ສັ່ງໃຫ້ເອົາປ້າຍແຫ່ງເສລີພາບ
ປັກໄວ້ຢູ່ເທິງຫໍສູງທຸກບ່ອນ, ໃຫ້ປັກໄວ້ທົ່ວ
ແຜ່ນດິນທີ່ຊາວນີໄຟເປັນເຈົ້າຂອງ; ແລະ
ດັ່ງນັ້ນໂມໂຣໄນຈຶ່ງໄດ້ສ້າງຕັ້ງເສລີພາບ
ຢ່າງມາດຕະຖານຂຶ້ນໃນບັນດາຊາວນີໄຟ.
37 ແລະ ພວກເຂົາເລີ່ມມີສັນຕິສຸກໃນ
ແຜ່ນດິນອີກ; ແລະ ພວກເຂົາໄດ້ດຳລົງຮັກ
ສາສັນຕິສຸກໄວ້ໃນແຜ່ນດິນຈົນເຖິງທ້າຍປີ
ທີສິບເກົ້າແຫ່ງການປົກຄອງຂອງຜູ້ຕັດສິນ.
38 ແລະ ຮີລາມັນ ແລະ ພວກ [ກ]ມະຫາ
ປະໂລຫິດກໍໄດ້ດຳລົງຮັກສາລະບຽບວິໄນ
ຂອງສາດສະໜາຈັກໄວ້; ແທ້ຈິງແລ້ວ, ເຂົາ
ເຈົ້າໄດ້ມີສັນຕິສຸກ ແລະ ມີຄວາມປິຕິຍິນດີ
ທີ່ສຸດໃນສາດສະໜາຈັກເປັນເວລາສີ່ປີ.
39 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີຜູ້
ຄົນເປັນຈຳນວນຫລວງຫລາຍໄດ້ຕາຍໄປ,
ໂດຍ [ກ]ເຊື່ອຖືຢ່າງໜັກແໜ້ນວ່າ ຈິດວິນ
ຍານຂອງພວກເຂົາຖືກໄຖ່ ໂດຍອົງພຣະ
ເຢຊູຄຣິດເຈົ້າ; ພວກເຂົາຈຶ່ງໄດ້ລາໂລກນີ້
ໄປດ້ວຍຄວາມປິຕິຍິນດີດັ່ງນັ້ນ.
40 ແລະ ມີບາງຄົນທີ່ຕາຍໄປຍ້ອນການ
ໄຂ້ຄີງຮ້ອນ ຊຶ່ງມີຂຶ້ນຢູ່ເລື້ອຍໆໃນບາງລະ
ດູ—ແຕ່ວ່າບໍ່ມີຄວາມຕາຍຫລາຍຍ້ອນ
ການໄຂ້ຄີງຮ້ອນເພາະວ່າຄຸນນະພາບ
ຂອງ [ກ]ຕົ້ນໄມ້ ແລະ ຮາກໄມ້ຫລາຍຊະ
ນິດຊຶ່ງພຣະເຈົ້າໄດ້ຕຽມໄວ້ໃຫ້ເພື່ອປິ່ນປົວ
ພະຍາດເຫລົ່ານັ້ນ, ຊຶ່ງມັນຕ້ອງເກີດກັບ
ມະນຸດເພາະວ່າທຳມະຊາດຂອງດິນຟ້າອາ
ກາດ—
41 ແຕ່ວ່າມີຫລາຍຄົນທີ່ໄດ້ຕາຍໄປ
ຍ້ອນຄວາມເຖົ້າແກ່; ແລະ ຜູ້ທີ່ຕາຍດ້ວຍ
ສັດທາໃນພຣະຄຣິດຈະ [ກ]ເປັນສຸກຢູ່ກັບ
ພຣະອົງ, ດັ່ງທີ່ພວກເຮົາຄິດໄວ້.

## ບົດທີ 47

*ອະມາລິໄຄຢາໃຊ້ເລ່ຫລ່ຽມ, ຄາດຕະ
ກຳ, ແລະ ກົນອຸບາຍເພື່ອຈະໄດ້ກາຍເປັນ
ກະສັດຂອງຊາວເລມັນ—ຊາວນີໄຟຜູ້ທີ່
ແຍກອອກໄປນັ້ນເປັນຄົນຊົ່ວ ແລະ ປ່າ
ເຖື່ອນຫລາຍກວ່າຊາວເລມັນ. ປະມານ 72
ປີ ກ່ອນ ຄ.ສ.*

1 ບັດນີ້ພວກເຮົາຈະບັນທຶກເລື່ອງລາວ
ຂອງອະມາລິໄຄຢາ ແລະ ພວກທີ່ [ກ]ໜີໄປ
ໃນຖິ່ນແຫ້ງແລ້ງກັນດານກັບລາວ; ເພາະ
ຈົ່ງເບິ່ງ, ລາວໄດ້ພາຄົນທີ່ໄປກັບລາວຂຶ້ນ
ໄປຫາ [ຂ]ແຜ່ນດິນນີໄຟໃນບັນດາຊາວ
ເລມັນ, ແລະ ຍຸຍົງຊາວເລມັນໃຫ້ຄຽດແຄ້ນ
ໃຫ້ຜູ້ຄົນຂອງນີໄຟ, ເຖິງຂະໜາດທີ່ກະສັດ
ຂອງຊາວເລມັນໄດ້ສົ່ງຂ່າວສານໄປທົ່ວ

38 *ກ* ແອວ 46:6.
39 *ກ* ມຣນ 7:3, 41.
40 *ກ* ຄພ 89:10.
41 *ກ* ພນມ 14:13.
**47** 1 *ກ* ແອວ 46:33.
*ຂ* 2 ນຟ 5:5–8;
ອມນ 1:12–13.

ແຜ່ນດິນຂອງຕົນ ໃນບັນດາຜູ້ຄົນທັງໝົດ
ຂອງຕົນ ໃຫ້ພວກເຂົາຮວບຮວມກັນອີກ
ເພື່ອໄປສູ້ຮົບກັບຊາວນີໄຟ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ຄົນທັງຫລາຍໄດ້ເຫັນຂ່າວສານນັ້ນແລ້ວ
ພວກເຂົາກໍມີຄວາມຢ້ານກົວຫລາຍທີ່ສຸດ;
ແທ້ຈິງແລ້ວ, ພວກເຂົາຢ້ານວ່າກະສັດຈະ
ບໍ່ພໍໃຈ, ແລະ ພວກເຂົາມີຄວາມຢ້ານກົວ
ທີ່ຈະໄປສູ້ຮົບກັບຊາວນີໄຟນຳອີກເພາະ
ຢ້ານວ່າຕົນເອງຈະຖືກຂ້າຕາຍ. ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ຍອມ,
ຫລື ວ່າຄົນສ່ວນຫລາຍຂອງພວກເຂົາບໍ່
ຍອມເຮັດຕາມຄຳສັ່ງຂອງກະສັດ.
3 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ກະສັດກໍໂມໂຫຮ້າຍຢ່າງໃຫຍ່ເພາະຜູ້
ຄົນບໍ່ເຊື່ອຟັງຕົນ; ສະນັ້ນ ເພິ່ນຈຶ່ງມອບ
ອຳນາດໃຫ້ອະມາລີໄຄຢາເປັນຜູ້ບັງຄັບ
ບັນຊາກອງທັບສ່ວນທີ່ເຊື່ອຟັງຄຳສັ່ງຂອງ
ຕົນ, ແລະ ສັ່ງໃຫ້ອະມາລີໄຄຢາອອກໄປ
ບັງຄັບຜູ້ຄົນໃຫ້ຈັບອາວຸດ.
4 ບັດນີ້ຈົ່ງເບິ່ງ, ນີ້ເປັນຄວາມປາດຖະ
ໜາຂອງອະມາລີໄຄຢາ; ເພາະລາວເປັນ
ຄົນທີ່ມີກົນອຸບາຍທີ່ຈະເຮັດຄວາມຊົ່ວຢູ່
ແລ້ວ ສະນັ້ນ ລາວຈຶ່ງໄດ້ວາງແຜນຢູ່ໃນ
ໃຈວ່າ ລາວຈະໂຄ່ນລົ້ມກະສັດຂອງຊາວ
ເລມັນອອກຈາກບັນລັງ.
5 ແລະ ບັດນີ້ອະມາລີໄຄຢາມີອຳນາດ
ບັງຄັບບັນຊາຊາວເລມັນຜູ້ທີ່ສະໜັບສະ
ໜູນກະສັດ; ແລະ ລາວພະຍາຍາມຈະໃຫ້
ຄົນທີ່ບໍ່ເຊື່ອຟັງກະສັດນິຍົມຊົມຊອບລາວ
ອີກ; ສະນັ້ນ ລາວຈຶ່ງໄດ້ອອກໄປຫາແຜ່ນ
ດິນບ່ອນໜຶ່ງທີ່ມີຊື່ວ່າ [ກ]ໂອໄນດາ, ເພາະ
ວ່າແຜ່ນດິນນັ້ນເປັນບ່ອນທີ່ຊາວເລມັນທັງ
ໝົດໜີໄປຢູ່; ເພາະພວກເຂົາຮູ້ຈັກວ່າກອງ
ທັບຈະຍົກມາໂດຍຄິດວ່າກອງທັບຈະຍົກ
ມາເພື່ອທຳລາຍພວກຕົນ, ສະນັ້ນ ພວກ
ເຂົາຈຶ່ງໄດ້ອອກໄປຫາແຜ່ນດິນໂອໄນດາ
ເພື່ອໄປຫາສາງອາວຸດ.
6 ແລະ ພວກເຂົາໄດ້ແຕ່ງຕັ້ງໃຫ້ຄົນຜູ້
ໜຶ່ງເປັນກະສັດ ແລະ ເປັນຜູ້ນຳ ແລະ ປົກ
ຄອງພວກເຂົາ, ເພາະພວກເຂົາໄດ້ຕັ້ງໃຈ
ຢ່າງແນ່ວແນ່ວ່າ ພວກເຂົາຈະບໍ່ຍອມໃຫ້
ຖືກບັງຄັບໃຫ້ໄປສູ້ຮົບກັບຊາວນີໄຟອີກ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ເຕົ້າໂຮມກັນຢູ່ເທິງຈອມພູທີ່ເອີ້ນ
ວ່າ ອັນຕີປາ, ເພື່ອຕຽມສູ້ຮົບ.
8 ບັດນີ້ມັນບໍ່ແມ່ນເຈດຕະນາຂອງອະ
ມາລີໄຄຢາທີ່ຈະໃຫ້ພວກເຂົາສູ້ຮົບກັນ
ຕາມຄຳສັ່ງຂອງກະສັດ; ແຕ່ຈົ່ງເບິ່ງ, ເຈດ
ຕະນາຂອງອະມາລີໄຄຢານັ້ນແມ່ນຈະພະ
ຍາຍາມໃຫ້ກອງທັບເລມັນນິຍົມຊົມຊອບ
ລາວ, ເພື່ອວ່າລາວຈະໄດ້ວາງຕົວເປັນຫົວ
ໜ້າ ແລະ ໂຄ່ນລົ້ມກະສັດອອກຈາກບັນລັງ
ແລະ ລາວເອງຈະໄດ້ຂຶ້ນເປັນກະສັດ ແລະ
ຍຶດຄອງອານາຈັກ.
9 ແລະ ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື ລາວໄດ້ສັ່ງໃຫ້ກອງທັບຂອງລາວຕັ້ງຜ້າ
ເຕັ້ນຂຶ້ນຢູ່ໃນຮ່ອມພູໃກ້ກັບພູອັນຕີປາ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຕອນກາງຄືນອະມາລີໄຄຢາໄດ້ສົ່ງຜູ້ຕາງ
ໜ້າຂຶ້ນໄປເທິງພູອັນຕີປາຢ່າງລັບໆ, ເພື່ອ
ເຊື້ອເຊີນລີຮອນໄທ ຫົວໜ້າຂອງພວກທີ່ຢູ່
ບ່ອນນັ້ນໃຫ້ລົງມາຕີນພູ ເພາະວ່າອະມາລີ
ໄຄຢາປາດຖະໜາທີ່ຈະເວົ້າກັບລາວ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ລີຮອນໄທໄດ້ຮັບຂ່າວນີ້ ລາວກໍບໍ່ກ້າລົງມາ
ຫາຕີນພູ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ອະມາລີໄຄຢາໄດ້ສົ່ງຄົນໄປອີກເປັນເທື່ອທີ

5 *ກ* ແອວ 32:4.

ສອງ ເພື່ອເຊື້ອເຊີນໃຫ້ລາວລົງມາ. ແລະ ເຫດການໄດ້ບັງເກີດຂຶ້ນຄື ລີຮອນໄທບໍ່ຍອມລົງມາອີກ ແລະ ອະມາລີໄຄຢາໄດ້ສົ່ງຄົນໄປອີກເປັນເທື່ອທີສາມ.

12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອອະມາລີໄຄຢາເຫັນວ່າລາວບໍ່ສາມາດເຮັດໃຫ້ລີຮອນໄທລົງມາຈາກຈອມພູ, ລາວເອງຈຶ່ງໄດ້ຂຶ້ນໄປເທິງຈອມພູເກືອບຮອດຄ້າຍຂອງລີຮອນໄທ, ແລະ ລາວກໍໄດ້ສົ່ງຂ່າວໄປໃຫ້ລີຮອນໄທອີກເປັນເທື່ອທີສີ່ໂດຍປາດຖະໜາໃຫ້ລາວລົງມາ, ແລະ ໃຫ້ນຳເອົາທະຫານອາລັກຂາມານຳ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາທີ່ລີຮອນໄທລົງມາຫາອະມາລີໄຄຢາພ້ອມດ້ວຍທະຫານອາລັກຂາຂອງລາວ, ອະມາລີໄຄຢາຢາກໃຫ້ລາວກັບຄືນມາອີກກັບກອງທັບຂອງລາວໃນຕອນກາງຄືນ, ແລະ ມາລ້ອມຄົນທີ່ຢູ່ໃນຄ້າຍຂອງອະມາລີໄຄຢາ ຊຶ່ງກະສັດໄດ້ໃຫ້ລາວມີອຳນາດບັງຄັບບັນຊາພວກທະຫານເຫລົ່ານັ້ນ, ແລະ ວ່າລາວຈະມອບທະຫານເຫລົ່ານັ້ນໃຫ້ຢູ່ໃນກຳມືຂອງລີຮອນໄທ, ຖ້າຫາກລາວຈະໃຫ້ລາວ (ອະມາລີໄຄຢາ) ເປັນຜູ້ລອງຫົວໜ້າຄວບຄຸມກອງທັບທັງໝົດ.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື ລີຮອນໄທໄດ້ລົງມາພ້ອມດ້ວຍຄົນຂອງລາວ ແລະ ລ້ອມຄົນຂອງອະມາລີໄຄຢາໄວ້, ດັ່ງນັ້ນກ່ອນພວກເຂົາຈະຕື່ນນອນ ພວກເຂົາກໍຖືກກອງທັບຂອງລີຮອນໄທອ້ອມໄວ້ກ່ອນແລ້ວ.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຄົນຂອງອະມາລີໄຄຢາເຫັນວ່າພວກຕົນຖືກປິດລ້ອມໄວ້, ພວກເຂົາຈຶ່ງໄດ້ອ້ອນວອນໃຫ້ອະມາລີໄຄຢາຍອມຕົວເຂົ້າຮ່ວມກັບພີ່ນ້ອງຂອງພວກເຂົາເສຍ, ເພື່ອພວກເຂົາຈະບໍ່ໄດ້ຖືກທຳລາຍ. ບັດນີ້ ນີ້ແຫລະ ຄືສິ່ງທີ່ອະມາລີໄຄຢາປາດຖະໜາ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະມາລີໄຄຢາໄດ້ມອບຄົນຂອງລາວ, ຊຶ່ງມັນເປັນ [ກ]ປໍລະປັກຕໍ່ຄຳສັ່ງຂອງກະສັດ. ນີ້ເປັນສິ່ງທີ່ອະມາລີໄຄຢາປາດຖະໜາ, ເພື່ອລາວຈະໄດ້ສຳເລັດໃນແຜນການຂອງຕົນໃນການໂຄ່ນລົ້ມກະສັດອອກຈາກບັນລັງ.

17 ບັດນີ້ມັນເປັນທຳນຽມໃນບັນດາຊາວເລມັນທີ່ວ່າ, ຖ້າຫາກຜູ້ນຳຫົວໜ້າຂອງພວກເຂົາຖືກຂ້າຕາຍ, ພວກເຂົາກໍຕ້ອງແຕ່ງຕັ້ງໃຫ້ຜູ້ລອງຂຶ້ນເປັນຫົວໜ້າແທນ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະມາລີໄຄຢາໄດ້ໃຫ້ຂ້າໃຊ້ຜູ້ໜຶ່ງຂອງລາວວາງຢາພິດລີຮອນໄທ ເທື່ອລະເລັກເທື່ອລະໜ້ອຍຈົນວ່າລີຮອນໄທຕາຍໄປ.

19 ບັດນີ້, ເມື່ອລີຮອນໄທຕາຍໄປແລ້ວ, ຊາວເລມັນກໍໄດ້ແຕ່ງຕັ້ງໃຫ້ອະມາລີໄຄຢາເປັນຜູ້ນຳຂອງພວກເຂົາ ແລະ ເປັນຫົວໜ້າບັງຄັບບັນຊາຂອງພວກເຂົາ.

20 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະມາລີໄຄຢາໄດ້ອອກເດີນທາງໄປພ້ອມດ້ວຍກອງທັບຂອງລາວ (ເພາະວ່າລາວໄດ້ຮັບຄວາມສຳເລັດທຸກຢ່າງຕາມຄວາມປາດຖະໜາຂອງລາວແລ້ວ) ຫາແຜ່ນດິນນີໄຟ, ໂດຍມຸ້ງໜ້າເຂົ້າໄປຫາເມືອງນີໄຟ, ຊຶ່ງເປັນເມືອງຫລວງຂອງແຜ່ນດິນ.

21 ແລະ ກະສັດກໍໄດ້ອອກມາພົບອະມາລີໄຄຢາ ພ້ອມດ້ວຍອາລັກຂາຂອງເພິ່ນ, ເພາະຄິດວ່າອະມາລີໄຄຢາໄດ້ປະຕິບັດຕາມຄຳສັ່ງ, ແລະ ວ່າອະມາລີໄຄຢາໄດ້ເຕົ້າໂຮມກອງທັບໃຫຍ່ເພື່ອໄປສູ້ຮົບກັບຊາວນີໄຟ.

---

16*ກ* ແອວ 47:3.

22 ແຕ່ຈົ່ງເບິ່ງ, ເວລາທີ່ກະສັດອອກມາ
ພົບອະມາລິໄຄຢາ ລາວກໍໃຫ້ຂ້າໃຊ້ຂອງ
ຕົນອອກໄປຕ້ອນຮັບກະສັດ. ແລະ ພວກ
ເຂົາໄດ້ອອກໄປ ແລະ ກົ້ມຂາບລົງຢູ່ຕໍ່ໜ້າ
ກະສັດ, ຄືກັບວ່າພວກເຂົາສະແດງຄວາມ
ຄາລະວະເພາະຄວາມຍິ່ງໃຫຍ່ຂອງເພິ່ນ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກະສັດກໍໄດ້ເດ່ມືອອກໄປ ເພື່ອໃຫ້ພວກ
ເຂົາລຸກຂຶ້ນ, ຕາມທຳນຽມຂອງຊາວເລມັນ,
ດັ່ງທີ່ເປັນເຄື່ອງໝາຍແຫ່ງສັນຕິພາບ, ຊຶ່ງ
ພວກເຂົາໄດ້ເອົາມາຈາກຊາວນີໄຟ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາເພິ່ນບອກໃຫ້ຂ້າໃຊ້ຂອງອະມາລິໄຄ
ຢາຄົນທຳອິດລຸກຂຶ້ນຈາກພື້ນດິນ, ຈົ່ງເບິ່ງ
ຄົນນັ້ນໄດ້ແທງກະສັດທະລຸຫົວໃຈ; ແລະ
ເພິ່ນໄດ້ລົ້ມລົງຢູ່ກັບພື້ນດິນ.
25 ບັດນີ້ຂ້າໃຊ້ຂອງກະສັດໄດ້ແລ່ນໜີ
ໄປ; ແລະ ຂ້າໃຊ້ຂອງອະມາລິໄຄຢາກໍສົ່ງ
ສຽງຮ້ອງຂຶ້ນວ່າ:
26 ຈົ່ງເບິ່ງ, ຂ້າໃຊ້ຂອງກະສັດເອງແທງ
ເພິ່ນຈົນທະລຸຫົວໃຈ, ແລະ ເພິ່ນໄດ້ລົ້ມລົງ
ແລະ ພວກເຂົາໄດ້ໜີໄປແລ້ວ; ຈົ່ງເບິ່ງ, ໃຫ້
ມາເບິ່ງໄວໆ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະ
ມາລິໄຄຢາໄດ້ສັ່ງໃຫ້ກອງທັບຂອງລາວ
ເຂົ້າມາເບິ່ງວ່າ ມັນມີອັນໃດເກີດຂຶ້ນກັບ
ກະສັດ; ແລະ ເວລາພວກເຂົາມາເຖິງ
ສະຖານທີ່ເກີດເຫດ ແລະ ເຫັນກະສັດ
ນອນຈົມເລືອດຢູ່, ອະມາລິໄຄຢາກໍທຳທ່າ
ໂມໂຫຮ້າຍຂຶ້ນ, ແລະ ກ່າວວ່າ: ຜູ້ໃດກໍ
ຕາມທີ່ມີຄວາມຈົງຮັກພັກດີຕໍ່ກະສັດ ຈົ່ງ
ອອກມາ, ແລະ ໄລ່ຕາມຂ້າໃຊ້ຂອງເພິ່ນໄປ
ເພື່ອຈະໄດ້ຂ້າພວກເຂົາຖິ້ມເສຍ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຜູ້ທີ່ມີຄວາມຈົງຮັກພັກດີຕໍ່ກະສັດໄດ້ຍິນຂໍ້
ຄວາມນີ້ແລ້ວ, ກໍໄດ້ອອກມາ ແລະ ໄລ່ຕາມ
ຂ້າໃຊ້ຂອງກະສັດໄປ.
29 ບັດນີ້ເວລາຂ້າໃຊ້ຂອງກະສັດເຫັນ
ກອງທັບໄລ່ຕາມຕົນມາ, ພວກເຂົາກໍຕົກໃຈ
ແລະ ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ,
ແລະ ຂ້າມໄປຫາແຜ່ນດິນເຊຣາເຮັມລາ
ແລະ ເຂົ້າຮ່ວມກັບ [ກ]ຜູ້ຄົນຂອງອຳໂມນ.
30 ແລະ ກອງທັບທີ່ໄລ່ຕາມພວກນັ້ນໄປ
ໄດ້ກັບຄືນມາ, ເມື່ອບໍ່ໄດ້ຮັບຜົນໃນການ
ໄລ່ຕາມ; ແລະ ດ້ວຍວ່າກົນອຸບາຍຂອງອະ
ມາລິໄຄຢາ, ລາວຈຶ່ງຊະນະໃຈຂອງຜູ້ຄົນ
ເຫລົ່ານັ້ນ.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ ລາວໄດ້ຍົກເຂົ້າເມືອງນີໄຟພ້ອມ
ດ້ວຍກອງທັບຂອງລາວ, ແລະ ເຂົ້າເປັນ
ເຈົ້າຂອງເມືອງ.
32 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ລາຊີນີໄດ້ຍິນວ່າກະສັດຖືກຂ້າຕາຍ—
ເພາະວ່າອະມາລິໄຄຢາໄດ້ສົ່ງນາຍທູດໄປ
ຫາລາຊີນີແຈ້ງບອກວ່າ ກະສັດຖືກຂ້າໃຊ້
ຂອງຕົນຂ້າຕາຍແລ້ວ, ແລະ ລາວໄດ້ໄລ່
ຕາມພວກເຂົາໄປພ້ອມດ້ວຍກອງທັບ, ແຕ່
ບໍ່ໄດ້ຮັບຜົນ, ແລະ ພວກເຂົາໄດ້ປົບໜີໄປ
ໄດ້—
33 ສະນັ້ນ, ເມື່ອລາຊີນີໄດ້ຮັບຂ່າວນີ້
ນາງຈຶ່ງໄດ້ສົ່ງຄົນໄປຫາອະມາລິໄຄຢາ, ບໍ່
ໃຫ້ລາວທຳຮ້າຍຜູ້ຄົນຜູ້ຢູ່ໃນເມືອງນີ້; ແລະ
ນາງປາດຖະໜາໃຫ້ລາວເຂົ້າມາພົບນາງ;
ແລະ ນາງປາດຖະໜາໃຫ້ລາວພາພະຍານ
ມານຳ ເພື່ອຈະໄດ້ໃຫ້ຖ້ອຍຄຳກ່ຽວກັບ
ການສິ້ນຊີວິດຂອງກະສັດ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະ
ມາລິໄຄຢາໄດ້ນຳເອົາຂ້າໃຊ້ຜູ້ທີ່ຂ້າກະສັດ

29 *ກ* ແອວ 43:11–12.

ຄມພ ອານໄທ-ນີໄຟ-ລີໄຮ.

ແລະ ຄົນທັງໝົດທີ່ຢູ່ນຳລາວເຂົ້າໄປພົບ
ກັບລາຊີນີໃນບ່ອນທີ່ນາງນັ່ງຢູ່; ແລະ ພວກ
ເຂົາ ທຸກ ຄົນ ໄດ້ ໃຫ້ ຖ້ອຍ ຄຳ ແກ່ນາງ ວ່າ
ກະສັດຖືກຂ້າໃຊ້ຂອງເພິ່ນເອງຂ້າຕາຍ;
ແລະ ພວກເຂົາເວົ້າອີກວ່າ: ການທີ່ພວກ
ເຂົາໜີໄປນີ້ ຍັງບໍ່ເປັນຫລັກຖານພຽງພໍທີ່
ຈະກ່າວໂທດພວກເຂົາບໍ? ແລະ ພວກເຂົາ
ເຮັດໃຫ້ລາຊີນີພໍໃຈໃນເຫດຜົນຂອງການ
ຕາຍຂອງກະສັດດັ່ງນີ້.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື ອະ
ມາລີໄຄຢາພະຍາຍາມສ້າງຕົນໃຫ້ເປັນທີ່ພໍ
ໃຈຂອງລາຊີນີ ແລະ ເອົານາງມາເປັນພັນ
ລະຍາຂອງຕົນ; ແລະ ດ້ວຍການຫລອກ
ລວງ, ແລະ ດ້ວຍຄວາມຊ່ວຍເຫລືອຂອງ
ຂ້າໃຊ້ທີ່ມີເລ່ຫລ່ຽມຂອງລາວ, ລາວຈຶ່ງໄດ້
ອານາຈັກມາປົກຄອງ; ແທ້ຈິງແລ້ວ, ເປັນ
ທີ່ຍອມຮັບວ່າລາວໄດ້ເປັນກະສັດປົກຄອງ
ຕະຫລອດທົ່ວແຜ່ນດິນໃນບັນດາຜູ້ຄົນທັງ
ໝົດຂອງຊາວເລມັນ, ຊຶ່ງ [ກ]ປະກອບດ້ວຍ
ຊາວເລມັນ ແລະ ຊາວເລມູເອນ ແລະ ຊາວ
ອິດຊະມາເອນ, ແລະ ຊາວນີໄຟທີ່ແຍກ
ອອກໄປທັງໝົດ, ນັບຕັ້ງແຕ່ການປົກຄອງ
ຂອງນີໄຟຈົນເຖິງປະຈຸບັນນີ້.
36 ບັດນີ້ [ກ]ພວກທີ່ແຍກອອກໄປນັ້ນເຄີຍ
ໄດ້ຮັບການແນະນຳມາ ແລະ ມີຄວາມ
ຮູ້ແບບດຽວກັນກັບຊາວນີໄຟ, ແທ້ຈິງ
ແລ້ວ, ພວກເຂົາໄດ້ຮັບການແນະນຳມາ
ໃນ [ຂ]ຄວາມຮູ້ແບບດຽວກັນ ກ່ຽວກັບພຣະ
ຜູ້ເປັນເຈົ້າ, ເຖິງຢ່າງໃດກໍຕາມ, ມັນເປັນ
ເລື່ອງແປກປະຫລາດທີ່ຈະເວົ້າວ່າ ຫລັງ
ຈາກພວກເຂົາໄດ້ແຍກອອກໄປບໍ່ດົນເທົ່າ
ໃດ, ພວກເຂົາກໍກາຍມາເປັນຄົນແຂງກະ
ດ້າງຫລາຍຂຶ້ນ ແລະ [ຄ]ບໍ່ສຳນຶກຜິດ, ປ່າ
ເຖື່ອນ, ຊົ່ວຮ້າຍ, ແລະ ໂຫດຮ້າຍຫລາຍ
ກວ່າຊາວເລມັນອີກຊ້ຳ—ກິນດື່ມຢູ່ຕາມ
ປະເພນີຂອງຊາວເລມັນ; ປ່ອຍຕົວໃຫ້ເປັນ
ຄົນຂີ້ຄ້ານມັກງ່າຍ, ແລະ ມີກິເລດຕັນຫາ
ນາໆປະການ; ແທ້ຈິງແລ້ວ, ພວກເຂົາໄດ້
ລືມພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາໝົດແລ້ວ.

## ບົດທີ 48

*ອະມາລີໄຄຢາຍຸຍົງໃຫ້ຊາວເລມັນຕໍ່ສູ້ກັບຊາວນີໄຟ—ໂມໂຣໄນຕຽມຜູ້ຄົນຂອງເພິ່ນໃຫ້ປ້ອງກັນອຸດົມການແຫ່ງຄຣິດສະຕຽນ—ເພິ່ນປີຕິຍິນດີໃນເສລີພາບ ແລະ ອິດສະລະພາບ ແລະ ເປັນຜູ້ຍິ່ງໃຫຍ່ຂອງພຣະເຈົ້າ. ປະມານ 72 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ ເຫດການໄດ້ບັງເກີດຂຶ້ນ
ຄື, ທັນທີທີ່ອະມາລີໄຄຢາໄດ້ຂຶ້ນຄອງອາ
ນາຈັກ ລາວກໍໄດ້ປຸກລະດົມໃຈຂອງຊາວ
ເລມັນໃຫ້ຄຽດແຄ້ນໃຫ້ຜູ້ຄົນຂອງນີໄຟ;
ແທ້ຈິງແລ້ວ, ລາວໄດ້ແຕ່ງຕັ້ງໃຫ້ມີຜູ້ເວົ້າ
ກັບຊາວເລມັນຈາກຫໍສູງ, ຕ້ານກັບຊາວ
ນີໄຟ.
2 ແລະ ລາວໄດ້ປຸກລະດົມໃຈຂອງພວກ
ເຂົາໃຫ້ເປັນສັດຕູກັບຊາວນີໄຟດັ່ງນີ້, ເຖິງ
ຂະໜາດທີ່ໃນທ້າຍປີທີສິບເກົ້າແຫ່ງການ
ປົກຄອງຂອງຜູ້ຕັດສິນ, ລາວໄດ້ສຳເລັດ
ແຜນການຂອງລາວມາເຖິງບັດນີ້, ແທ້ຈິງ
ແລ້ວ, ເມື່ອລາວໄດ້ຖືກແຕ່ງຕັ້ງໃຫ້ເປັນ
ກະສັດປົກຄອງຊາວເລມັນ, ລາວຈຶ່ງພະ
ຍາຍາມທີ່ຈະປົກຄອງທົ່ວແຜ່ນດິນ, ແທ້ຈິງ
ແລ້ວ, ລາວຢາກປົກຄອງຜູ້ຄົນທັງໝົດໃນ
ທົ່ວແຜ່ນດິນ, ທັງຊາວເລມັນ ແລະ ຊາວ
ນີໄຟນຳກັນ.
3 ສະນັ້ນ ລາວ ຈຶ່ງ ສຳ ເລັດ ແລ້ວ ຕາມ

35 *ກ* ຢຄ 1:13–14.
36 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຂ* ຮຣ 10:26–27; ແອວ 24:30.
*ຄ* ຢມຢ 8:12.

ແຜນ ການ ຂອງ ລາວ, ເພາະ ວ່າ ລາວ ໄດ້
ເຮັດ ໃຫ້ ໃຈຂອງຊາວ ເລ ມັນ ແຂງກະດ້າງ
ແລະ ເຮັດໃຫ້ຈິດໃຈຂອງພວກເຂົາມືດມົນ,
ແລະ ລາວໄດ້ຍຸຍົງໃຫ້ພວກເຂົາຄຽດແຄ້ນ,
ເຖິງຂະໜາດທີ່ລາວໄດ້ເຕົ້າໂຮມທະຫານ
ໄດ້ຢ່າງຫລວງຫລາຍ ເພື່ອຈະໄດ້ໄປສູ້ຮົບ
ກັບຊາວນີໄຟ.
4 ຍ້ອນວ່າຈຳນວນທະຫານຢ່າງຫລວງ
ຫລາຍຂອງລາວ, ລາວຈຶ່ງໄດ້ຕັ້ງໃຈໄວ້ວ່າ
ລາວຈະເອົາຊະນະຊາວນີໄຟ ແລະ ຈະ
ເອົາພວກເຂົາມາສູ່ຄວາມເປັນທາດ.
5 ແລະ ລາວໄດ້ແຕ່ງຕັ້ງຊາວໂຊຣຳໃຫ້
ເປັນ [ກ]ຫົວໜ້ານາຍທະຫານ, ເພາະວ່າ
ພວກເຂົາມີຄວາມຮູ້ດີທີ່ສຸດກ່ຽວກັບກຳລັງ
ພົນຂອງຊາວນີໄຟ, ແລະ ບ່ອນຕັ້ງກຳລັງ
ຂອງພວກເຂົາ, ແລະ ເມືອງໃດທີ່ບໍ່ມີກຳ
ລັງພຽງພໍ; ສະນັ້ນ ລາວຈຶ່ງໄດ້ແຕ່ງຕັ້ງພວກ
ເຂົາໃຫ້ເປັນນາຍທະຫານຊັ້ນຫົວໜ້າເພື່ອ
ບັງຄັບບັນຊາກອງທັບທະຫານຂອງລາວ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ເຄື່ອນຍ້າຍກອງທັບເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານ ມຸ້ງໜ້າໄປຫາແຜ່ນດິນ
ເຊຣາເຮັມລາ.
7 ບັດ ນີ້ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຂະນະ ທີ່ ອະມາລີໄຄຢາໄດ້ອຳນາດມາ
ດ້ວຍກົນອຸບາຍ ແລະ ດ້ວຍຄຳຫລອກລວງ
ຕ່າງໆ, ກົງກັນຂ້າມ, ໂມໂຣໄນໄດ້ [ກ]ຕຽມ
ຈິດໃຈຂອງຜູ້ຄົນ ໃຫ້ຊື່ສັດຕໍ່ພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.
8 ແທ້ຈິງແລ້ວ, ເພິ່ນໄດ້ສົ່ງເສີມກຳລັງ
ກອງທັບຂອງຊາວນີໄຟ, ແລະ ໄດ້ສ້າງ
ປ້ອມຍາມນ້ອຍ ຫລື ບ່ອນສະສົມກຳລັງຂຶ້ນ
ຫລາຍແຫ່ງ; ໂດຍຖູນດິນຂຶ້ນອ້ອມຮອບ
ເປັນຄູລ້ອມກອງທັບຂອງເພິ່ນໄວ້, ແລະ
ສ້າງກຳແພງຫີນຂຶ້ນອ້ອມພວກທະຫານ
ໄວ້, ພ້ອມທັງຮອບເມືອງ ແລະ ຊາຍແດນ
ຂອງແຜ່ນດິນນຳອີກ; ແທ້ຈິງແລ້ວ, ເພິ່ນໄດ້
ສ້າງກຳແພງຂຶ້ນໃຫ້ຮອບທົ່ວແຜ່ນດິນ.
9 ແລະ ຄ້າຍໃດທີ່ມີກຳລັງບໍ່ພຽງພໍ ເພິ່ນ
ກໍໄດ້ວາງຈຳນວນທະຫານໄວ້ຢ່າງຫລວງ
ຫລາຍ; ແລະ ເພິ່ນໄດ້ເສີມກຳລັງ ແລະ
ໄດ້ເຮັດໃຫ້ແຜ່ນດິນຊຶ່ງຊາວນີໄຟເປັນເຈົ້າ
ຂອງເຂັ້ມແຂງຂຶ້ນເລື້ອຍໆ.
10 ແລະ ເພິ່ນໄດ້ຕຽມພ້ອມຢູ່ສະເໝີເພື່ອ
ວ່າຈະໄດ້ [ກ]ສະໜັບສະໜູນເສລີພາບຂອງ
ພວກເຂົາ, ແຜ່ນດິນຂອງພວກເຂົາ, ເມຍ
ຂອງພວກເຂົາ, ແລະ ລູກຂອງພວກເຂົາ,
ແລະ ສັນຕິສຸກຂອງພວກເຂົາ, ແລະ ເພື່ອ
ວ່າພວກເຂົາຈະໄດ້ມີຊີວິດຢູ່ກັບພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ,
ແລະ ເພື່ອພວກເຂົາຈະໄດ້ຮັກສາສິ່ງທີ່ສັດ
ຕູຂອງພວກເຂົາເອີ້ນວ່າ ອຸດົມການແຫ່ງ
ຄຣິດສະຕຽນ.
11 ແລະ ໂມໂຣໄນເປັນຄົນແຂງແຮງ
ແລະ ມີກຳລັງຫລາຍ; ແລະ ເພິ່ນເປັນຄົນ
[ກ]ສະຫລຽວສະຫລາດ; ແທ້ຈິງແລ້ວ, ເພິ່ນ
ເປັນຄົນທີ່ບໍ່ປິຕິຍິນດີໃນການນອງເລືອດ;
ແຕ່ເປັນຄົນທີ່ປິຕິຍິນດີໃນເສລີພາບ ແລະ
ອິດສະລະພາບຂອງປະເທດຊາດຂອງຕົນ,
ແລະ ເພື່ອວ່າພີ່ນ້ອງຂອງເພິ່ນຈະໄດ້ຫລີກ
ເວັ້ນຈາກຄວາມເປັນທາດ ແລະ ຂ້ອຍຂ້າ;
12 ແທ້ຈິງແລ້ວ, ເພິ່ນເປັນຄົນທີ່ມີໃຈຊຶ່ງ
ເຕັມໄປດ້ວຍຄວາມຂອບພຣະໄທພຣະ
ເຈົ້າຂອງເພິ່ນ, ສຳລັບສິດທິພິເສດ ແລະ
ພອນຕ່າງໆທີ່ພຣະອົງໄດ້ປະທານໃຫ້
ແກ່ຜູ້ຄົນຂອງເພິ່ນ; ແລະ ເພິ່ນເປັນຄົນທີ່
ອອກແຮງງານຢ່າງຂະຫຍັນຂັນແຂງ ເພື່ອ
[ກ]ຄວາມຜາສຸກ ແລະ ເພື່ອຄວາມປອດໄພ

**48** 5*ກ* ແອວ 43:6.
7*ກ* ແອວ 49:8.
10*ກ* ແອວ 46:12–13.
11*ກ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
12*ກ* ຄມພ ຄວາມຜາສຸກ.

ຂອງຜູ້ຄົນຂອງເພິ່ນ.
13 ແທ້ ຈິງ ແລ້ວ, ແລະ ເພິ່ນ ເປັນ ຄົນ ທີ່
ໝັ້ນ ຄົງ ຢູ່ ນຳສັດທາໃນ ພຣະ ຄຣິດ, ແລະ
ເພິ່ນໄດ້ກ່າວ [ກ]ຄຳສາບານໄວ້ວ່າ ເພິ່ນຈະ
ປ້ອງກັນຜູ້ ຄົນ ຂອງ ເພິ່ນ, ສິດ ຂອງ ເພິ່ນ,
ແລະ ປະເທດຊາດຂອງເພິ່ນ, ແລະ ສາດ
ສະໜາຂອງເພິ່ນ, ເຖິງແມ່ນວ່າເພິ່ນຈະສູນ
ເສຍເລືອດເນື້ອຂອງເພິ່ນກໍຕາມ.
14 ບັດນີ້ຊາວນີໄຟໄດ້ຮັບການສິດສອນ
ໃຫ້ປ້ອງກັນ ຕົວ ເອງ ຈາກສັດຕູ, ຈົນ ເຖິງ
ການນອງເລືອດຖ້າຫາກຈຳເປັນ; ແທ້ຈິງ
ແລ້ວ, ແລະ ພວກເຂົາໄດ້ຮັບການສິດສອນ
ວ່າ [ກ]ບໍ່ໃຫ້ຮຸກຮານຜູ້ໃດ, ແທ້ຈິງແລ້ວ, ບໍ່
ໃຫ້ຍົກດາບຂຶ້ນເລີຍເວັ້ນເສຍແຕ່ຈະເປັນ
ການຕໍ່ສູ້ສັດຕູ, ຍົກເວັ້ນແຕ່ຈະເປັນໄປເພື່ອ
ປົກປ້ອງຊີວິດຂອງຕົນເອງເທົ່ານັ້ນ.
15 ແລະ ນີ້ຄືສັດທາຂອງພວກເຂົາ, ໂດຍ
ການປະຕິບັດ ແບບນີ້ ພຣະ ເຈົ້າ ຈະ ເຮັດ
ໃຫ້ພວກເຂົາຈະເລີນຮຸ່ງເຮືອງຢູ່ໃນແຜ່ນ
ດິນ, ຫລື ອີກຄຳໜຶ່ງ, ຖ້າພວກເຂົາຊື່ສັດ
ໃນການຮັກສາພຣະບັນຍັດຂອງພຣະເຈົ້າ
ແລ້ວ ພຣະອົງຈະເຮັດໃຫ້ພວກເຂົາຈະເລີນ
ຮຸ່ງເຮືອງຢູ່ໃນແຜ່ນດິນ; ແທ້ຈິງແລ້ວ, ຈະ
ເຕືອນພວກເຂົາໃຫ້ອອກໜີໄປ, ຫລື ວ່າໃຫ້
ຕຽມເພື່ອສົງຄາມ, ອີງຕາມຄວາມອັນຕະ
ລາຍຂອງພວກເຂົາ;
16 ແລະ ພຣະເຈົ້າຈະເຮັດໃຫ້ເປັນທີ່ຮູ້
ຈັກ ແກ່ພວກ ເຂົາ ອີກວ່າ ພວກເຂົາຄວນ
ຈະໄປທາງໃດເພື່ອຕໍ່ສູ້ກັບສັດຕູຂອງພວກ
ເຂົາ, ແລະ ໂດຍການກະທຳດັ່ງນີ້, ພຣະຜູ້
ເປັນເຈົ້າຈະໄດ້ປົດປ່ອຍພວກເຂົາ; ແລະ ນີ້
ຄືສັດທາຂອງໂມໂຣໄນ ແລະ ໃຈຂອງເພິ່ນ
ປາບປື້ມໃນສິ່ງເຫລົ່ານັ້ນ; [ກ]ບໍ່ແມ່ນໃນການ
ນອງເລືອດ, ແຕ່ໃນການເຮັດຄວາມດີ, ໃນ
ການປ້ອງກັນຜູ້ຄົນຂອງເພິ່ນ, ແທ້ຈິງແລ້ວ,
ໃນການຮັກສາພຣະບັນຍັດຂອງພຣະເຈົ້າ,
ແທ້ຈິງແລ້ວ, ແລະ ໃນການຕ້ານທານກັບ
ຄວາມຊົ່ວຮ້າຍ.
17 ແທ້ ຈິງ ແລ້ວ, ຂ້າ ພະ ເຈົ້າ ກ່າວ ຕາມ
ຄວາມ ຈິງກັບ ພວກທ່ານວ່າ, ຖ້າຫາກຄົນ
ທັງ ປວງ ໄດ້ ເປັນ ມາ ແລ້ວ ແລະ ເປັນ ຢູ່,
ແລະ ຈະ ເປັນ ຢູ່, ຄືກັນກັບ ໂມ ໂຣ ໄນ, ຈົ່ງ
ເບິ່ງ, ອຳນາດ ຂອງນະລົກ ນັ້ນຈະສັ່ນ ສະ
ເທືອນຕະຫລອດການ; ແທ້ຈິງແລ້ວ, [ກ]ມານ
ຈະບໍ່ ມີ ອຳນາດ ເໜືອ ໃຈ ຂອງລູກ ຫລານ
ມະນຸດເລີຍ.
18 ຈົ່ງ ເບິ່ງ, ເພິ່ນ ເປັນ ຄົນ ຄື ກັນ ກັບ
ອຳໂມນ, ລູກຊາຍຂອງໂມໄຊຢາ, ແທ້ຈິງ
ແລ້ວ, ຄືກັນກັບລູກຊາຍຜູ້ອື່ນໆຂອງໂມໄຊ
ຢາ, ແທ້ຈິງແລ້ວ, ແລະ ຄືກັນກັບ ແອວມາ
ແລະ ພວກ ລູກ ຊາຍ ຂອງ ເພິ່ນ ນຳອີກ,
ເພາະວ່າເຂົາເຈົ້າເຫລົ່ານັ້ນລ້ວນແລ້ວແຕ່
ເປັນຄົນຂອງພຣະເຈົ້າທັງນັ້ນ.
19 ບັດນີ້ຈົ່ງເບິ່ງ, ຮີລາມັນ ແລະ ພີ່ນ້ອງ
ຂອງເພິ່ນກໍບໍ່ໄດ້ຮັບໃຊ້ຜູ້ຄົນໜ້ອຍໄປກວ່າ
ໂມໂຣໄນເລີຍ; ເພາະເຂົາເຈົ້າໄດ້ສັ່ງສອນ
ພຣະຄຳຂອງພຣະເຈົ້າ, ແລະ ເຂົາເຈົ້າໄດ້
ໃຫ້ບັບຕິສະມາໄວ້ກັບການກັບໃຈ ແກ່ຄົນ
ທັງປວງທີ່ຍອມເຊື່ອຟັງຄຳເວົ້າຂອງເຂົາ
ເຈົ້າ.
20 ແລະ ເຂົາເຈົ້າໄດ້ອອກໄປດັ່ງນີ້, ແລະ
ຜູ້ຄົນໄດ້ [ກ]ຖ່ອມຕົວຍ້ອນຄຳເວົ້າຂອງເຂົາ
ເຈົ້າ, ເຖິງຂະໜາດທີ່ເຂົາເຈົ້າໄດ້ເປັນທີ່ຊົງ
[ຂ]ໂປດປານຂອງພຣະຜູ້ເປັນເຈົ້າ, ແລະ ດັ່ງ

13 *ກ* ແອວ 46:20–22.
14 *ກ* ແອວ 43:46–47; 3 ນຟ 3:20–21; ມມ 3:10–11; ຄພ 98:16.
16 *ກ* ແອວ 55:19.
17 *ກ* 1 ນຟ 22:26; 3 ນຟ 6:15.
20 *ກ* ຄນພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຂ* 1 ນຟ 17:35.

ນັ້ນພວກເຂົາຈຶ່ງໄດ້ເປັນອິດສະລະຈາກສົງ
ຄາມ ແລະ ຈາກການຂັດແຍ້ງໃນບັນດາ
ພວກເຂົາເອງ, ແທ້ຈິງແລ້ວ, ເປັນເວລາເຖິງ
ສີ່ປີ.

21 ແຕ່ວ່າຄືກັນກັບທີ່ຂ້າພະເຈົ້າໄດ້
ເວົ້າໃນຕອນທ້າຍປີທີສິບເກົ້ານັ້ນ, ແທ້ຈິງ
ແລ້ວ, ມັນມີສັນຕິສຸກໃນບັນດາພວກເຂົາ
ເອງ, ພວກເຂົາໄດ້ຖືກບັງຄັບຢ່າງບໍ່ເຕັມໃຈ
ໃຫ້ໄປຕໍ່ສູ້ກັບຊາວເລມັນພີ່ນ້ອງຂອງພວກ
ເຂົາ.

22 ແທ້ຈິງແລ້ວ, ແລະ ໂດຍສະຫລຸບ, ສົງ
ຄາມຂອງພວກເຂົາທີ່ເຮັດກັບຊາວເລມັນບໍ່
ເຄີຍຢຸດລົງເລີຍເປັນເວລາຫລາຍປີ, ທັງທີ່
ພວກເຂົາບໍ່ເຕັມໃຈຢາກເຮັດ.

23 ບັດນີ້, ພວກເຂົາ [ກ]ເສຍໃຈທີ່ຕ້ອງຈັບ
ອາວຸດຂຶ້ນຕໍ່ສູ້ກັບຊາວເລມັນອີກ, ເພາະວ່າ
ພວກເຂົາບໍ່ພໍໃຈກັບການນອງເລືອດເລີຍ;
ແທ້ຈິງແລ້ວ, ແລະ ນີ້ຍັງບໍ່ໝົດ—ພວກເຂົາ
ເສຍໃຈທີ່ໄດ້ເປັນທາງສົ່ງພີ່ນ້ອງຂອງພວກ
ເຂົາຢ່າງຫລວງຫລາຍອອກຈາກໂລກນີ້ໄປ
ສູ່ໂລກນິລັນດອນ, ໂດຍບໍ່ໄດ້ຕຽມພ້ອມທີ່
ຈະພົບກັບພຣະເຈົ້າຂອງພວກເຂົາເລີຍ.

24 ເຖິງຢ່າງໃດກໍຕາມ, ພວກເຂົາຈະບໍ່
ຍອມເດັດຂາດທີ່ຈະສະລະຊີວິດຂອງຕົນ
ໄປລ້າໆ, ແລະ ປ່ອຍໃຫ້ [ກ]ເມຍຂອງພວກ
ເຂົາ ແລະ ລູກຂອງພວກເຂົາຖືກຂ້າດ້ວຍ
ຄວາມຮ້າຍກາດ ແລະ ຄວາມປ່າເຖື່ອນ
ຂອງຄົນ ຊຶ່ງເຄີຍເປັນພີ່ນ້ອງກັນມາກ່ອນ,
ແທ້ຈິງແລ້ວ, ຊຶ່ງເປັນຜູ້ທີ່ໄດ້ [ຂ]ແຍກອອກ
ໄປຈາກສາດສະໜາຈັກ, ແລະ ໜີຈາກ
ພວກເຂົາໄປເພື່ອຈະໄດ້ກັບມາທຳລາຍພີ່
ນ້ອງຂອງຕົນ ໂດຍການເຂົ້າຮ່ວມກັບຊາວ
ເລມັນ.

25 ແທ້ຈິງແລ້ວ, ພວກເຂົາທົນບໍ່ໄດ້ທີ່
ພີ່ນ້ອງຂອງພວກເຂົາຈະປິຕິຍິນດີຢູ່ກັບ
ເລືອດຂອງຊາວນີໄຟ ເພາະຄຳສັນຍາຂອງ
ພຣະເຈົ້າທີ່ມີຢູ່ວ່າ ຕາບໃດທີ່ຍັງມີຄົນຮັກ
ສາພຣະບັນຍັດຂອງພຣະເຈົ້າຢູ່ ເພາະຄຳ
ສັນຍາຂອງພຣະຜູ້ເປັນເຈົ້າມີຢູ່ວ່າ ຖ້າຫາກ
ພວກເຂົາຈະຮັກສາພຣະບັນຍັດຂອງພຣະ
ອົງ ພວກເຂົາຈະຮຸ່ງເຮືອງຢູ່ໃນແຜ່ນດິນ.

## ບົດທີ 49

*ການຮຸກຮານຂອງຊາວເລມັນບໍ່ສາມາດ
ທີ່ຈະຍຶດເອົາເມືອງອຳໂມນໄນຮາ ແລະ
ເມືອງໂນອາທີ່ເປັນດ່ານປ້ອງກັນໄປໄດ້—
ອະມາລີໄຄຢາສາບແຊ່ງພຣະເຈົ້າ ແລະ
ສາບານວ່າຈະດື່ມເລືອດຂອງໂມໂຣໄນ—
ຮີລາມັນ ແລະ ພີ່ນ້ອງຂອງເພິ່ນຮັກສາສາດ
ສະໜາຈັກໃຫ້ເຂັ້ມແຂງຕໍ່ໄປ. ປະມານ 72
ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ໃນເດືອນທີສິບເອັດຂອງປີທີສິບເກົ້າ, ໃນ
ວັນທີສິບຂອງເດືອນນີ້ ມີຄົນເຫັນກອງ
ທັບຂອງຊາວເລມັນຍົກໄປທາງແຜ່ນດິນ
ອຳໂມນໄນຮາ.

2 ແລະ ຈົ່ງເບິ່ງ, ເມືອງນີ້ຖືກສ້າງຂຶ້ນໃໝ່
ແລະ ໂມໂຣໄນໄດ້ຕັ້ງກອງທັບໄວ້ໃກ້ຊາຍ
ແດນຂອງເມືອງນີ້, ແລະ ພວກເຂົາໄດ້ຄູນ
ດິນຂຶ້ນໂດຍຮອບເພື່ອປ້ອງກັນຕົນເອງ
ຈາກລູກທະນູ ແລະ ກ້ອນຫີນຂອງຊາວ
ເລມັນ; ເພາະຈົ່ງເບິ່ງ, ພວກເຂົາໄດ້ຕໍ່ສູ້
ດ້ວຍກ້ອນຫີນ ແລະ ດ້ວຍລູກທະນູ.

3 ຈົ່ງເບິ່ງ, ຂ້າພະເຈົ້າກ່າວວ່າ ເມືອງ
[ກ]ອຳໂມນໄນຮາໄດ້ຖືກສ້າງຂຶ້ນໃໝ່ແລ້ວ.
ຂ້າພະເຈົ້າກ່າວກັບພວກທ່ານວ່າ, ແທ້ຈິງ
ແລ້ວ, ມັນໄດ້ສ້າງຂຶ້ນໃໝ່ເປັນບາງສ່ວນ

23 *ກ* ຄພ 42:45.
24 *ກ* ແອວ 46:12.
*ຂ* ຄນພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
**49** 3 *ກ* ແອວ 16:2–3, 9, 11.

ຍ້ອນວ່າເມືອງນີ້ໄດ້ຖືກຊາວເລມັນທຳລາຍ
ມາເທື່ອໜຶ່ງແລ້ວ ເພາະຄວາມຊົ່ວຮ້າຍ
ຂອງຜູ້ຄົນ, ດັ່ງນັ້ນພວກເຂົາຈຶ່ງຄິດວ່າມັນ
ຈະເປັນເຫຍື່ອອັນງ່າຍດາຍສຳລັບພວກ
ເຂົາອີກ.
4 ແຕ່ຈົ່ງເບິ່ງ, ພວກເຂົາຜິດຫວັງຫລາຍ
ທີ່ສຸດ; ເພາະຈົ່ງເບິ່ງ, ຊາວນີໄຟໄດ້ຂຸດດິນ
ເຮັດເປັນຄັນຄູໄວ້ໂດຍຮອບ, ຊຶ່ງຄັນຄູນັ້ນ
ສູງສົມຄວນຈົນວ່າຊາວເລມັນແກວ່ງກ້ອນ
ຫີນ ແລະ ຍິງທະນູຂ້າມໄປບໍ່ໄດ້, ທັງຈະ
ເຂົ້າໂຈມຕີກໍບໍ່ໄດ້ ນອກຈາກຈະເຂົ້າໄປ
ທາງປະຕູເທົ່ານັ້ນ.
5 ບັດນີ້ເມື່ອຫົວໜ້ານາຍທະຫານຂອງ
ຊາວເລມັນເຫັນດັ່ງນັ້ນ ກໍແປກໃຈຢ່າງຍິ່ງ
ເພາະປັນຍາຂອງຊາວນີໄຟໃນການຕຽມ
ບ່ອນປ້ອງກັນຕົວຂອງພວກເຂົາ.
6 ບັດນີ້ພວກຜູ້ນຳຂອງຊາວເລມັນຄິດ
ວ່າ, ຍ້ອນຄວາມຫລວງຫລາຍຂອງຜູ້ຄົນ
ຂອງນີໄຟ, ແທ້ຈິງແລ້ວ, ພວກເຂົາຄິດວ່າ
ພວກເຂົາຈະມີຊ່ອງທາງເພື່ອເຂົ້າໂຈມຕີ
ຊາວນີໄຟຄືກັນກັບທີ່ເຄີຍກະທຳມາແລ້ວ;
ແທ້ຈິງແລ້ວ, ພວກເຂົາກໍໄດ້ຕຽມພ້ອມ
ຄືກັນ, ພວກເຂົາມີໂລ່ ແລະ ມີແຜ່ນປົກ
ເອິກ; ແລະ ພວກເຂົາກໍໄດ້ໃສ່ເຄື່ອງນຸ່ງທີ່
ເຮັດດ້ວຍໜັງ, ແທ້ຈິງແລ້ວ, ເປັນເຄື່ອງນຸ່ງ
ທີ່ໜາເພື່ອປົກປິດຄວາມເປືອຍເປົ່າຂອງ
ພວກເຂົາ.
7 ແລະ ໂດຍທີ່ຕຽມພ້ອມຮຽບຮ້ອຍດັ່ງນັ້ນ
ພວກເຂົາຈຶ່ງຄິດວ່າພວກເຂົາຈະເອົາຊະນະ
ແລະ ຈະເອົາພີ່ນ້ອງຂອງພວກເຂົາໄປຫາ
ແອກແຫ່ງຄວາມເປັນທາດ, ຫລື ຂ້າຖິ້ມໄດ້
ຢ່າງງ່າຍດາຍ, ຫລື ຈະທຳລາຍສັດຕູເສຍ
ໃຫ້ໝົດຕາມຄວາມພໍໃຈຂອງພວກເຂົາ.
8 ແຕ່ຈົ່ງເບິ່ງ, ພວກເຂົາເກີດມີຄວາມ
ແປກປະຫລາດໃຈຫລາຍທີ່ສຸດ ເມື່ອພວກ
ເຂົາເຫັນວ່າຊາວນີໄຟໄດ້ [ກ]ຕຽມຕໍ່ສູ້ກັບ
ພວກເຂົາໃນວິທີທີ່ບໍ່ເຄີຍໄດ້ຮູ້ໄດ້ເຫັນມາ
ກ່ອນໃນບັນດາລູກຫລານຂອງລີໄຮ. ບັດ
ນີ້ພວກເຂົາຕຽມຕໍ່ສູ້ກັບຊາວເລມັນຕາມຄຳ
ແນະນຳຂອງໂມໂຣໄນ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນ ຫລື ຊາວອະມາລີໄຄຢາແປກປະ
ຫລາດໃຈຢ່າງຍິ່ງກັບການຕຽມສົງຄາມ
ຂອງພວກເຂົາ.
10 ບັດນີ້, ຖ້າຫາກກະສັດອະມາລີໄຄຢາ
ໄດ້ລົງມາຈາກ [ກ]ແຜ່ນດິນນີໄຟເພື່ອເປັນ
ຜູ້ນຳກອງທັບຂອງລາວ, ລາວອາດຈະ
ໃຫ້ຊາວເລມັນໂຈມຕີຊາວນີໄຟໃນເມືອງ
ອຳໂມນໄນຮາທັນທີ; ເພາະວ່າລາວບໍ່ໄດ້
ຄິດເຖິງເລືອດເນື້ອຂອງຜູ້ຄົນຂອງລາວ
ເລີຍ.
11 ແຕ່ຈົ່ງເບິ່ງ, ອະມາລີໄຄຢາບໍ່ໄດ້ລົງ
ມາສູ້ຮົບ. ແລະ ຈົ່ງເບິ່ງ, ຫົວໜ້ານາຍທະ
ຫານຂອງລາວບໍ່ກ້າເຂົ້າໂຈມຕີຊາວນີໄຟ
ໃນເມືອງອຳໂມນໄນຮາ, ເພາະວ່າໂມໂຣ
ໄນປ່ຽນວິທີດຳເນີນການງານໃນບັນດາ
ຊາວນີໄຟ, ເຖິງຂະໜາດທີ່ຊາວເລມັນຜິດ
ຫວັງໃນສະຖານທີ່ ຊຶ່ງເຮັດໃຫ້ພວກເຂົາໄດ້
ຖອຍໜີໄປເພາະພວກເຂົາເຂົ້າໄປໂຈມຕີບໍ່
ໄດ້.
12 ສະນັ້ນ ພວກເຂົາຈຶ່ງໄດ້ຖອຍໜີເຂົ້າ
ໄປໃນຖິ່ນແຫ້ງແລ້ງກັນດານ, ແລະ ຍົກ
ຍ້າຍຄ້າຍຂອງພວກເຂົາ ແລະ ເດີນທັບໄປ
ທາງແຜ່ນດິນໂນອາ, ໂດຍຄິດວ່າບ່ອນນັ້ນ
ຈະເປັນບ່ອນທີ່ດີທີ່ສຸດສຳລັບພວກເຂົາທີ່
ຈະຕໍ່ສູ້ກັບຊາວນີໄຟ.
13 ເພາະພວກເຂົາບໍ່ຮູ້ຈັກວ່າໂມໂຣໄນ
ໄດ້ເສີມກຳລັງໄວ້, ຫລື ສ້າງ [ກ]ຄ້າຍຍາມໄວ້

8 *ກ* ແອວ 48:7–10.
10 *ກ* 2 ນຟ 5:8; ອມນ 1:12; ແອວ 47:1.
13 *ກ* ແອວ 48:8.

ທຸກທິວເມືອງໂດຍຮອບ; ສະນັ້ນ, ພວກເຂົາ
ຈຶ່ງ ເດີນທັບ ໄປຫາ ແຜ່ນດິນ ໂນອາ ດ້ວຍ
ມີຄວາມຕັ້ງໃຈອັນແນ່ວແນ່; ແທ້ຈິງແລ້ວ,
ຫົວ ໜ້າ ນາຍທະຫານ ຂອງພວກເຂົາໄດ້
ອອກມາໃຫ້ຄຳສາບານວ່າ ພວກເຂົາຈະ
ທຳລາຍຜູ້ຄົນໃນເມືອງນັ້ນ.

14 ແຕ່ຈົ່ງເບິ່ງ, ມັນເກີດຄວາມແປກປະ
ຫລາດໃຈຫລາຍທີ່ສຸດແກ່ພວກເຂົາ, ເພາະ
ວ່າເມືອງໂນອາ ຊຶ່ງແຕ່ກ່ອນເຄີຍເປັນບ່ອນ
ທີ່ອ່ອນແອ, ບັດນີ້, ໂດຍໃຊ້ວິທີຂອງໂມໂຣ
ໄນ, ມັນຈຶ່ງກາຍມາເປັນບ່ອນທີ່ເຂັ້ມແຂງ,
ແທ້ຈິງແລ້ວ, ມັນມີຄວາມເຂັ້ມແຂງຫລາຍ
ກວ່າເມືອງອຳໂມນໄນຮາອີກຊ້ຳ.

15 ແລະ ບັດນີ້, ຈົ່ງເບິ່ງນີ້ຄືປັນຍາຂອງ
ໂມໂຣໄນ; ເພາະເພິ່ນຄິດວ່າເມືອງອຳໂມນ
ໄນຮາ ຈະເຮັດໃຫ້ພວກເຂົາຢ້ານກົວ, ແລະ
ໂດຍທີ່ກ່ອນໜ້ານີ້ ເມືອງໂນອາ ເປັນສ່ວນ
ທີ່ອ່ອນແອທີ່ສຸດຂອງແຜ່ນດິນ, ສະນັ້ນ
ພວກເຂົາຈະເດີນທັບໄປສູ້ຮົບທີ່ນັ້ນ, ແລະ
ມັນເປັນໄປຕາມຄວາມປາດຖະໜາຂອງ
ເພິ່ນດັ່ງນັ້ນ.

16 ແລະ ຈົ່ງເບິ່ງ, ໂມໂຣໄນໄດ້ແຕ່ງຕັ້ງ
ລີໄຮໃຫ້ເປັນຫົວໜ້ານາຍທະຫານເພື່ອບັງ
ຄັບບັນຊາຜູ້ຄົນຢູ່ໃນເມືອງນັ້ນ; ແລະ ແມ່ນ
ລີໄຮ [ກ]ຜູ້ດຽວກັນນີ້ທີ່ໄດ້ຕໍ່ສູ້ກັບຊາວເລມັນ
ຢູ່ໃນຮ່ອມພູທາງຕາເວັນອອກຂອງແມ່ນ້ຳ
ຊີໂດນ.

17 ແລະ ບັດນີ້ຈົ່ງເບິ່ງ ເຫດການໄດ້ບັງ
ເກີດຂຶ້ນ, ຄືເວລາຊາວເລມັນຮູ້ຈັກວ່າລີໄຮ
ເປັນຜູ້ບັງຄັບບັນຊາເມືອງນີ້ ພວກເຂົາກໍ
ຜິດຫວັງອີກ, ເພາະວ່າພວກເຂົາຢ້ານກົວ
ລີໄຮຫລາຍທີ່ສຸດ; ເຖິງຢ່າງໃດກໍຕາມຫົວ
ໜ້ານາຍທະຫານຂອງພວກເຂົາໄດ້ໃຫ້ຄຳ
ສາບານໄວ້ແລ້ວວ່າ ພວກເຂົາຈະເຂົ້າໂຈມ
ຕີເມືອງນີ້; ສະນັ້ນ, ພວກເຂົາຈຶ່ງໄດ້ຍົກ
ກອງທັບຂອງພວກເຂົາເຂົ້າມາ.

18 ບັດນີ້ ຈົ່ງເບິ່ງ, ຊາວເລມັນບໍ່ສາມາດ
ເຂົ້າໄປໃນຄ້າຍຍາມຂອງຊາວນີໄຟບໍ່ວ່າ
ຈະເປັນທາງໃດກໍຕາມ, ນອກຈາກຈະເປັນ
ທາງປະຕູເທົ່ານັ້ນ ຍ້ອນວ່າຄວາມສູງຂອງ
ຄັນຄູ ຊຶ່ງຄູນຂຶ້ນໄວ້ ແລະ ຄວາມເລິກຂອງ
ຕະຄອງ ຊຶ່ງຂຸດໄວ້ໂດຍຮອບ ນອກຈາກ
ແຕ່ທາງປະຕູເທົ່ານັ້ນ.

19 ແລະ ຊາວນີໄຟໄດ້ຕຽມພ້ອມຢູ່
ສະເໝີດັ່ງນີ້ທີ່ຈະທຳລາຍທຸກຄົນທີ່ພະຍາ
ຍາມປີນຂຶ້ນປ້ອມຍາມທາງອື່ນໂດຍການ
ແກວ່ງກ້ອນຫີນ ແລະ ຍິງລູກທະນູໃສ່.

20 ແລະ ນາຍຍາມໄດ້ຕຽມພ້ອມຢູ່ແບບ
ນີ້, ແທ້ຈິງແລ້ວ, ພວກເຂົາເປັນຄົນແຂງ
ແຮງຫລາຍທີ່ສຸດ, ຊຶ່ງຕຽມພ້ອມດ້ວຍດາບ
ແລະ ກະທຸນ, ເພື່ອຈະໄດ້ຟັນທຸກຄົນທີ່ພະ
ຍາຍາມບຸກເຂົ້າມາໃນຄ້າຍຍາມທາງປະຕູ
ຂອງພວກເຂົາ; ແລະ ພວກເຂົາໄດ້ຕຽມ
ພ້ອມທີ່ຈະສູ້ຮົບກັບຊາວເລມັນດັ່ງນີ້.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ນາຍທະຫານຂອງຊາວເລມັນໄດ້ຍົກກອງ
ທັບມາຢູ່ໜ້າທາງເຂົ້າ ແລະ ເລີ່ມຕໍ່ສູ້ກັບ
ຊາວນີໄຟ, ເພື່ອຈະໄດ້ເຂົ້າໄປໃນຄ້າຍ
ຍາມຂອງພວກເຂົາ; ແຕ່ຈົ່ງເບິ່ງ, ພວກ
ເຂົາຖືກໄລ່ອອກໄປເປັນບາງຄັ້ງ, ເຖິງຂະ
ໜາດທີ່ພວກເຂົາຖືກຂ້າຕາຍເປັນຈຳນວນ
ຫລວງຫລາຍ.

22 ບັດນີ້ເວລາພວກເຂົາເຫັນວ່າພວກ
ເຂົາບໍ່ສາມາດເອົາຊະນະຊາວນີໄຟທາງ
ປະຕູເຂົ້າ, ພວກເຂົາຈຶ່ງເລີ່ມຂຸດຄັນຄູຂອງ
ຊາວນີໄຟລົງ ເພື່ອຈະໄດ້ມີຫົນທາງເຂົ້າໄປ
ຫາກອງທັບຂອງພວກຊາວນີໄຟ, ເພື່ອຈະ
ໄດ້ມີໂອກາດຕໍ່ສູ້ຢ່າງເທົ່າທຽມກັນ; ແຕ່ຈົ່ງ

16 *ກ* ແອວ 43:35.

ເບິ່ງ, ໃນຄວາມພະຍາຍາມເຫລົ່ານີ້ ພວກ
ເຂົາ ຖືກ ກວາດ ອອກ ໄປ ໂດຍ ກ້ອນ ຫີນ
ແລະ ລູກທະນູ ຊຶ່ງຖືກຍິງມາໃສ່ພວກເຂົາ;
ແລະ ແທນທີ່ພວກເຂົາຈະຖົມຮ່ອງພວກ
ນັ້ນໂດຍການພັງດິນລົງມາ ມັນກັບເຕັມຂຶ້ນ
ສ່ວນໜຶ່ງດ້ວຍຄົນຕາຍ ແລະ ຄົນບາດເຈັບ
ຂອງພວກເຂົາ.
23 ແລະ ຊາວນີໄຟຈຶ່ງມີອຳນາດທັງໝົດ
ເໜືອ ກວ່າ ສັດ ຕູຂອງພວກ ເຂົາ ແບບ ນີ້;
ແລະ ຊາວເລມັນໄດ້ພະຍາຍາມຢູ່ສະເໝີ
ທີ່ຈະທຳລາຍຊາວນີໄຟຈົນວ່າຫົວໜ້ານາຍ
ທະຫານຂອງພວກເຂົາຖືກຂ້າຕາຍຈົນ
ໝົດ; ແທ້ຈິງແລ້ວ, ຊາວເລມັນຫລາຍກວ່າ
ພັນຄົນຖືກຂ້າຕາຍ, ກົງກັນຂ້າມ, ທາງຝ່າຍ
ຊາວນີໄຟບໍ່ມີຈັກຄົນເລີຍຖືກຂ້າຕາຍ.
24 ມີຢູ່ປະມານຫ້າສິບຄົນເທົ່ານັ້ນໄດ້
ຮັບບາດເຈັບ, ຜູ້ຊຶ່ງເປີດຮັບລູກທະນູຂອງ
ຊາວເລມັນທີ່ທາງເຂົ້າ, ແຕ່ພວກເຂົາຖືກ
ປ້ອງກັນໄວ້ດ້ວຍໂລ່ຂອງພວກເຂົາ, ແລະ
ແຜ່ນປົກເອິກຂອງພວກເຂົາ, ແລະ ເຄື່ອງ
ປ້ອງກັນຫົວຂອງພວກເຂົາ, ເຖິງຂະໜາດ
ທີ່ພວກເຂົາໄດ້ຮັບບາດເຈັບຢູ່ທີ່ຂາ, ຊຶ່ງ
ຫລາຍຄົນໄດ້ຮັບບາດເຈັບສາຫັດ.
25 ແລະ ເຫດການ ໄດ້ບັງເກີດຂຶ້ນ, ຄື
ເວລາຊາວເລມັນເຫັນວ່າຫົວໜ້ານາຍທະ
ຫານຂອງຕົນຖືກຂ້າຕາຍໝົດແລ້ວ ພວກ
ເຂົາຈຶ່ງໄດ້ປົບໜີເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ກັບຄືນໄປຫາແຜ່ນດິນນີໄຟ
ເພື່ອແຈ້ງຄວາມກ່ຽວກັບຄວາມເສຍຫາຍ
ອັນໃຫຍ່ຫລວງຂອງຕົນ ຕໍ່ອະມາລີໄຄຢາ
ຜູ້ເປັນກະສັດຂອງພວກເຂົາ, ຊຶ່ງເປັນຄົນ
ຂອງນີໄຟໂດຍກຳເນີດ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ໂມໂຫຮ້າຍໃຫ້ຜູ້ຄົນຂອງຕົນຫລາຍທີ່
ສຸດ, ຍ້ອນວ່າລາວບໍ່ໄດ້ບັນລຸຕາມຄວາມ
ປາດຖະໜາຂອງລາວທີ່ມີກັບຊາວນີໄຟ;
ເພາະລາວບໍ່ໄດ້ເອົາພວກເຂົາມາສູ່ແອກ
ແຫ່ງຄວາມເປັນທາດ.
27 ແທ້ຈິງແລ້ວ, ລາວມີຄວາມຄຽດແຄ້ນ
ຫລາຍທີ່ສຸດ, ແລະ ລາວໄດ້ [ກ]ສາບແຊ່ງ
ພຣະເຈົ້າ ແລະ ໂມໂຣໄນນຳອີກ, ໂດຍກ່າວ
[ຂ]ຄຳສາບານວ່າ ລາວຈະກິນເລືອດຂອງ
ເພິ່ນ; ແລະ ນີ້ຍ້ອນວ່າໂມໂຣໄນຮັກສາພຣະ
ບັນຍັດຂອງພຣະເຈົ້າໃນການຕຽມພ້ອມ
ເພື່ອຄວາມປອດໄພຂອງຜູ້ຄົນຂອງເພິ່ນ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ອີກ
ທາງໜຶ່ງຜູ້ຄົນຂອງນີໄຟໄດ້ຖວາຍຄວາມ
[ກ]ຂອບພຣະໄທແດ່ພຣະເຈົ້າຂອງພວກ
ເຂົາ, ເພາະອຳນາດອັນຫາທີ່ປຽບບໍ່ໄດ້
ຂອງພຣະອົງໃນການປົດປ່ອຍພວກເຂົາ
ໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ.
29 ແລະ ປີທີສິບເກົ້າແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້.
30 ແທ້ຈິງແລ້ວ, ແລະ ມັນມີສັນຕິສຸກ
ຕໍ່ເນື່ອງກັນໄປໃນບັນດາປະຊາຊົນຂອງ
ນີໄຟ, ແລະ ມີຄວາມຈະເລີນຮຸ່ງເຮືອງຢ່າງ
ຍິ່ງຢູ່ໃນສາດສະໜາຈັກ ເພາະວ່າຄວາມ
ເອົາໃຈໃສ່ ແລະ ຄວາມພາກພຽນຂອງ
ພວກເຂົາຊຶ່ງມີຕໍ່ພຣະຄຳຂອງພຣະເຈົ້າ
ຊຶ່ງຮີລາມັນ, ຊິບລັນ, ແລະ ໂຄຣິອານທັນ,
ແລະ ອຳໂມນ ແລະ ພີ່ນ້ອງຂອງເພິ່ນໄດ້
ປະກາດກັບພວກເຂົາ, ແທ້ຈິງແລ້ວ, ແລະ
ໂດຍຄົນທັງໝົດຜູ້ທີ່ໄດ້ຮັບແຕ່ງຕັ້ງໃຫ້ມີ
[ກ]ລະບຽບອັນສັກສິດຂອງພຣະເຈົ້າ, ໂດຍ
ການຮັບບັບຕິສະມາໄວ້ກັບການກັບໃຈ,
ແລະ ໄດ້ອອກໄປສັ່ງສອນໃນບັນດາຜູ້ຄົນ.

27ກ ຄມພ ໝິ່ນປະໝາດ, ການໝິ່ນປະໝາດ.
ຂ ກຈກ 23:12.
28ກ ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
30ກ ແອວ 43:2.

## ບົດທີ 50

*ໂມໂຣໄນສ້າງປ້ອມຍາມປ້ອງກັນແຜ່ນດິນຂອງຊາວນີໄຟ—ພວກເຂົາໄດ້ສ້າງເມືອງໃໝ່ຂຶ້ນຫລາຍເມືອງ—ສົງຄາມ ແລະ ການທຳລາຍໄດ້ເກີດຂຶ້ນກັບຊາວນີໄຟໃນວັນເວລາຂອງຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ—ໂມຣິອານທັນ ແລະ ຜູ້ທີ່ແຍກອອກໄປເຂົ້າຮ່ວມກັບລາວໄດ້ເສຍໄຊໃຫ້ທີອານຄຳ—ນີໄຟຮາໄດ້ສິ້ນຊີວິດໄປ, ແລະ ເພໂຮຣັນລູກຊາຍຂອງເພິ່ນໄດ້ຮັບຕຳແໜ່ງຂຶ້ນນັ່ງບັນລັງຕັດສິນແທນ. ປະມານ 72–67 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ໂມໂຣໄນບໍ່ໄດ້ຢຸດຢັ້ງການຕຽມສົງຄາມ
ເພື່ອປ້ອງກັນຜູ້ຄົນຂອງເພິ່ນໃຫ້ພົ້ນຈາກ
ຊາວເລມັນ, ເພາະເພິ່ນໄດ້ສັ່ງໃຫ້ກອງທັບ
ຂອງເພິ່ນເລີ່ມເຮັດວຽກໃນຕົ້ນປີທີຊາວ
ແຫ່ງການປົກຄອງຂອງຜູ້ຕັດສິນ, ຄືພວກ
ທະຫານຄວນຂຸດດິນເຮັດເປັນຄັນຄູໄວ້
ຮອບເມືອງຕະຫລອດທົ່ວແຜ່ນດິນທີ່ຊາວ
ນີໄຟເປັນເຈົ້າຂອງ.
2 ແລະ ເທິງຄັນຄູເຫລົ່ານັ້ນ ເພິ່ນໄດ້ສັ່ງ
ໃຫ້ປັກຫລັກໄມ້ຂຶ້ນ, ແທ້ຈິງແລ້ວ, ຫລັກໄມ້
ເຫລົ່ານັ້ນໃຫ້ສູງເທົ່າກັບຄົນໄວ້ຮອບເມືອງ.
3 ແລະ ເພິ່ນສັ່ງວ່າ ພວກເຂົາຄວນເຮັດ
ຂອບເປັນໄມ້ແຫລມປັກໄວ້ເທິງຫລັກໄມ້
ເຫລົ່ານັ້ນ ແລະ ເຮັດໃຫ້ມັນສູງແຂງແກ່ນທີ່
ສຸດ.
4 ແລະ ເພິ່ນໃຫ້ສ້າງຫໍສູງເພື່ອຈະໄດ້
ຫລຽວເຫັນຂ້າມໄມ້ແຫລມເຫລົ່ານັ້ນໄດ້,
ແລະ ເພິ່ນໃຫ້ສ້າງບ່ອນຫລົບໄພໄວ້ເທິງຫໍ
ສູງເຫລົ່ານັ້ນ, ເພື່ອວ່າກ້ອນຫີນ ແລະ ລູກ
ທະນູຂອງຊາວເລມັນຈະເຮັດອັນຕະລາຍ
ໃຫ້ພວກເຂົາບໍ່ໄດ້.
5 ແລະ ພວກເຂົາກໍຕຽມພ້ອມທີ່ຈະ
ແກວ່ງກ້ອນຫີນຈາກຫໍສູງນັ້ນຕາມຄວາມພໍ
ໃຈ ແລະ ຕາມກຳລັງຂອງພວກເຂົາ, ເພື່ອ
ຈະໄດ້ຂ້າຜູ້ທີ່ພະຍາຍາມເຂົ້າມາໃກ້ກຳ
ແພງເມືອງ.
6 ໂມໂຣໄນໄດ້ຕຽມທີ່ໝັ້ນໄວ້ຮອບເມືອງ
ທົ່ວແຜ່ນດິນຕາມນີ້ ເພື່ອຕ້ານທານການມາ
ຮຸກຮານຂອງສັດຕູ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣ
ໄນໄດ້ສັ່ງໃຫ້ທະຫານຂອງເພິ່ນອອກໄປໃນ
ຖິ່ນແຫ້ງແລ້ງກັນດານທາງຕາເວັນອອກ;
ແທ້ຈິງແລ້ວ, ກອງທັບເຫລົ່ານີ້ໄດ້ອອກໄປ
ຂັບໄລ່ຊາວເລມັນທັງໝົດທີ່ຢູ່ໃນຖິ່ນແຫ້ງ
ແລ້ງກັນດານທາງຕາເວັນອອກໃຫ້ກັບໄປ
ຫາແຜ່ນດິນຂອງພວກເຂົາເອງ, ຊຶ່ງຢູ່ທາງ
ໃຕ້ຂອງແຜ່ນດິນເຊຣາເຮັມລາ.
8 ແລະ ແຜ່ນດິນນີໄຟໄດ້ຍາວຢຽດຊື່ໄປ
ຈາກທະເລທາງຕາເວັນອອກເຖິງທາງຕາ
ເວັນຕົກ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ໂມໂຣໄນໄດ້ຂັບໄລ່ຊາວເລມັນທັງໝົດ
ອອກຈາກຖິ່ນແຫ້ງແລ້ງກັນດານທາງຕາ
ເວັນອອກ ຊຶ່ງຢູ່ທາງເໜືອຂອງແຜ່ນດິນ
ຕ່າງໆ ຊຶ່ງເປັນແຜ່ນດິນຂອງພວກເຂົາເອງ
ແລ້ວ, ເພິ່ນໄດ້ໃຫ້ຜູ້ອາໄສທີ່ຢູ່ໃນແຜ່ນດິນ
ເຊຣາເຮັມລາ ແລະ ທີ່ຢູ່ໃນແຜ່ນດິນອ້ອມ
ແອ້ມນັ້ນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ
ທາງຕາເວັນອອກຈົນເຖິງຊາຍແດນໃກ້ຝັ່ງ
ທະເລ ແລະ ເຂົ້າໄປເປັນເຈົ້າຂອງແຜ່ນດິນ
ນັ້ນ.
10 ແລະ ເພິ່ນໄດ້ວາງກອງທັບໄວ້ທາງ
ໃຕ້ໃນຊາຍແດນຂອງພວກເຂົານຳອີກ,
ແລະ ໃຫ້ພວກເຂົາສ້າງ [ກ]ບ່ອນປ້ອງກັນຂຶ້ນ

**50** 10 *ກ* ແອວ 49:18–22.

ເພື່ອ ຈະ ໄດ້ ເຮັດ ໃຫ້ ກອງ ທັບ ແລະ ຜູ້ ຄົນ
ຂອງພວກເຂົາປອດໄພຈາກກຳມືຂອງສັດ
ຕູຂອງພວກເຂົາ.
11 ແລະ ເພິ່ນໄດ້ຕັດທີ່ໝັ້ນທັງໝົດຂອງ
ຊາວ ເລມັນ ຢູ່ ໃນ ຖິ່ນ ແຫ້ງ ແລ້ງ ກັນ ດານ
ທາງຕາເວັນອອກດັ່ງນີ້, ແທ້ຈິງແລ້ວ, ທັງ
ທາງ ຕາ ເວັນ ຕົກນຳອີກ, ໂດຍການ ເສີມ
ກຳລັງແຍກທາງ ໄວ້ລະຫວ່າງຊາວນີໄຟ
ແລະ ຊາວ ເລມັນ, ລະຫວ່າງ ແຜ່ນ ດິນ
ເຊຣາເຮັມລາ ແລະ ແຜ່ນດິນນີໄຟ, ຈາກ
ທະເລທາງຕາເວັນຕົກໄປເຖິງຫົວແມ່ນ້ຳ
ຊີໂດນ—ຊາວນີໄຟໄດ້ເປັນເຈົ້າຂອງແຜ່ນ
ດິນທັງໝົດທາງເໜືອໄດ້ຕາມໃຈຊອບ, ແທ້
ຈິງແລ້ວ, ລວມທັງແຜ່ນດິນທັງໝົດ ຊຶ່ງຢູ່
ທາງເໜືອຂອງແຜ່ນດິນອຸດົມສົມບູນ.
12 ດ້ວຍເຫດນີ້ ໂມໂຣໄນພ້ອມກຳລັງ
ກອງທັບ ຂອງ ເພິ່ນ ຈຶ່ງ ມີ ກຳ ລັງ ເພີ່ມຂຶ້ນ
ທຸກໆມື້ ເພາະວ່າຄວາມໝັ້ນໃຈໃນການ
ຄຸ້ມກັນ ຊຶ່ງຜົນງານຂອງເພິ່ນໄດ້ນຳອອກ
ມາໃຫ້ພວກເຂົາເຫັນໄດ້ວ່າເພິ່ນກຳລັງຕັດ
ກຳລັງ ແລະ ອຳນາດຂອງຊາວເລມັນອອກ
ຈາກແຜ່ນດິນຊຶ່ງເປັນຂອງພວກເຂົາ, ເພື່ອ
ບໍ່ໃຫ້ພວກເຂົາມີອຳນາດປົກຄອງແຜ່ນດິນ
ຂອງພວກເຂົາ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ນີໄຟໄດ້ເລີ່ມສ້າງເມືອງໜຶ່ງຂຶ້ນ, ແລະ ພວກ
ເຂົາເອີ້ນເມືອງນັ້ນວ່າ ໂມໂຣໄນ; ແລະ ມັນ
ຕັ້ງຢູ່ໃກ້ທະເລທາງຕາເວັນອອກ; ແລະ ມັນ
ຢູ່ທາງ ໃຕ້ ໃກ້ກັບ ເສັ້ນເຂດ ແດນ ແຜ່ນດິນ
ຂອງຊາວເລມັນ.
14 ແລະ ພວກ ເຂົາ ໄດ້ ເລີ່ມ ສ້າງ ເມືອງ
ໜຶ່ງ ຂຶ້ນ ອີກ ຊຶ່ງຕັ້ງຢູ່ລະຫວ່າງເມືອງ ໂມ
ໂຣໄນກັບເມືອງອາໂຣນ, ໂດຍເຊື່ອມໂຍງ
ຊາຍ ແດນ ເມືອງອາ ໂຣນກັບ ເມືອງ ໂມ ໂຣ
ໄນ ເຂົ້າກັນ; ແລະ ພວກເຂົາເອີ້ນຊື່ເມືອງ
ຫລື ແຜ່ນດິນນີ້ວ່າ ນີໄຟຮາ.
15 ແລະ ໃນ ປີ ດຽວກັນນັ້ນ ພວກເຂົາ
ກໍໄດ້ເລີ່ມສ້າງເມືອງຂຶ້ນຫລາຍແຫ່ງທາງ
ເໜືອນຳອີກ, ແລະ ເມືອງໜຶ່ງຖືກສ້າງຂຶ້ນ
ດ້ວຍວິທີພິເສດ ຊຶ່ງເອີ້ນວ່າ ລີໄຮ, ຊຶ່ງຢູ່
ທາງເໜືອໃກ້ກັບຝັ່ງທະເລ.
16 ແລະ ປີທີຊາວໄດ້ສິ້ນສຸດລົງດັ່ງນີ້.
17 ແລະ ຜູ້ຄົນຂອງນີໄຟຢູ່ໃນສະພາບ
ທີ່ຈະເລີນຮຸ່ງເຮືອງຢູ່ໃນຕົ້ນປີທີຊາວເອັດ
ແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້
ຄົນນີໄຟ.
18 ແລະ ພວກເຂົາໄດ້ຈະເລີນຮຸ່ງເຮືອງ
ຢ່າງຍິ່ງ ແລະ ກາຍເປັນຄົນຮັ່ງມີຢ່າງຍິ່ງ;
ແທ້ຈິງແລ້ວ, ພວກເຂົາໄດ້ມີຄົນເພີ່ມທະວີ
ຂຶ້ນ ແລະ ໄດ້ພັດທະນາຫລາຍຂຶ້ນໃນແຜ່ນ
ດິນ.
19 ແລະ ພວກ ເຮົາ ຈຶ່ງ ເຫັນ ດັ່ງ ນັ້ນ ວ່າ
ພຣະຜູ້ເປັນເຈົ້າມີຄວາມເມດຕາປານີ ແລະ
ມີຄວາມຍຸດຕິທຳຫລາຍປານໃດ ເພື່ອພຣະ
ອົງຈະໄດ້ສຳເລັດໃນພຣະຄຳທັງໝົດຂອງ
ພຣະອົງ ຊຶ່ງໄດ້ສັນຍາໄວ້ກັບລູກຫລານ
ມະນຸດ; ແທ້ຈິງແລ້ວ, ພວກເຮົາເຫັນໄດ້ວ່າ
ໃນເວລານີ້ພຣະຄຳຂອງພຣະອົງປະກົດ
ເປັນຈິງຂຶ້ນແລ້ວ, ຊຶ່ງພຣະອົງໄດ້ກ່າວໄວ້
ກັບລີໄຮວ່າ:
20 ເຈົ້າ ແລະ ລູກຫລານ ຂອງ ເຈົ້າ ເປັນ
ສຸກແລ້ວ; ແລະ ພວກເຂົາຈະໄດ້ຮັບພອນ,
ຕາບໃດທີ່ພວກເຂົາຈະຮັກສາບັນຍັດຂອງ
ເຮົາ ພວກເຂົາຈະຮຸ່ງເຮືອງຢູ່ໃນແຜ່ນດິນ.
ແຕ່ຈົ່ງຈຳໄວ້ວ່າ, ຕາບໃດທີ່ພວກເຂົາຈະ
ບໍ່ຮັກສາບັນຍັດຂອງເຮົາ ພວກເຂົາຈະຖືກ
[ກ]ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນ
ເຈົ້າ.

20 *ກ* ຄພ 1:14.

21 ແລະ ພວກເຮົາຈຶ່ງເຫັນໄດ້ວ່າ ຄຳສັນ
ຍາ ເຫລົ່ານີ້ປະກົດ ເປັນ ຈິງກັບ ຜູ້ຄົນ ຂອງ
ນີໄຟ ແລ້ວ; ເພາະວ່າເປັນການຜິດພາດ
ແລະ ການຂັດແຍ້ງກັນຂອງພວກເຂົາ, ແທ້
ຈິງແລ້ວ, ການຄາດຕະກຳຂອງພວກເຂົາ,
ການປຸ້ນຈີ້ຂອງພວກເຂົາ, ການນັບຖືຮູບ
ບູຊາຂອງພວກເຂົາ, ການໂສເພນີຂອງພວກ
ເຂົາ, ແລະ ຄວາມໜ້າກຽດຊັງຂອງພວກ
ເຂົາ, ທີ່ມີຢູ່ໃນບັນດາພວກເຂົາເອງ, ຊຶ່ງມັນ
ໄດ້ນຳເອົາສົງຄາມ ແລະ ຄວາມພິນາດມາສູ່
ຕົນ.
22 ແລະ ຄົນທີ່ຊື່ສັດໃນການຮັກສາພຣະ
ບັນ ຍັດຂອງພຣະເຈົ້າ ໄດ້ຖືກປົດປ່ອຍຢູ່
ສະເໝີ, ຂະນະທີ່ພີ່ນ້ອງທີ່ຊົ່ວ ຮ້າຍ ຂອງ
ພວກເຂົາເປັນພັນໆຄົນຖືກສົ່ງໄປສູ່ຄວາມ
ເປັນທາດ, ຫລື ຕາຍດ້ວຍດາບ, ຫລື ເສື່ອມ
ໂຊມຢູ່ໃນຄວາມບໍ່ເຊື່ອຖື, ແລະ ເຂົ້າໄປສົມ
ທົບກັບຊາວເລມັນ.
23 ແຕ່ຈົ່ງເບິ່ງ ນັບຕັ້ງແຕ່ວັນເວລາຂອງ
ນີໄຟ ເປັນ ຕົ້ນ ມາ, ມັນບໍ່ເຄີຍມີເວລາໃດ
ເລີຍທີ່ [ກ]ສະຫງົບສຸກຢູ່ໃນບັນດາຜູ້ຄົນຂອງ
ນີໄຟເກີນກວ່າໃນວັນເວລາຂອງໂມໂຣໄນ,
ແທ້ຈິງແລ້ວ, ເວລານີ້ເປັນປີທີຊາວ ເອັດ
ແຫ່ງການປົກຄອງຂອງຜູ້ຕັດສິນ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີ
ຊາວສອງແຫ່ງການປົກຄອງຂອງຜູ້ຕັດສິນ
ໄດ້ສິ້ນສຸດລົງດ້ວຍສັນຕິສຸກ ແລະ ປີທີຊາວ
ສາມກໍຄືກັນ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຕົ້ນ ປີ ທີ ຊາວສີ່ແຫ່ງການປົກຄອງຂອງຜູ້
ຕັດສິນ, ມັນມີສັນຕິສຸກຢູ່ໃນບັນດາຜູ້ຄົນ
ຂອງນີໄຟອີກ ຖ້າຫາກມັນບໍ່ໄດ້ມີ [ກ]ການ
ຂັດແຍ້ງກັນເກີດຂຶ້ນໃນບັນດາຜູ້ຄົນຢູ່ໃນ
ແຜ່ນດິນລີໄຮ, ແລະ ຜູ້ຄົນຢູ່ໃນແຜ່ນດິນ
ໂມຣິອານທັນ, ຊຶ່ງຢູ່ຕິດຊາຍແດນລີໄຮ; ຊຶ່ງ
ແຜ່ນດິນທັງສອງນີ້ມີຊາຍແດນຕິດກັບຝັ່ງ
ທະເລ.
26 ເພາະຈົ່ງເບິ່ງ, ຜູ້ຄົນທີ່ເປັນເຈົ້າຂອງ
ແຜ່ນ ດິນ ໂມຣິອານທັນ ໄດ້ຮຽກຮ້ອງ ເອົາ
ສິດທີສ່ວນໜຶ່ງຂອງແຜ່ນດິນລີໄຮ; ສະນັ້ນ
ມັນຈຶ່ງເລີ່ມມີການຂັດແຍ້ງກັນຂຶ້ນຫລາຍພໍ
ສົມຄວນລະຫວ່າງພວກເຂົາເອງ, ເຖິງຂະ
ໜາດທີ່ຜູ້ຄົນຂອງໂມຣິອານທັນຈັບອາວຸດ
ຂຶ້ນຕໍ່ສູ້ກັບພີ່ນ້ອງຂອງພວກເຂົາເອງ, ແລະ
ຕັ້ງໃຈຈະຂ້າພວກເຂົາຖິ້ມດ້ວຍດາບ.
27 ແຕ່ ຈົ່ງ ເບິ່ງ, ຜູ້ຄົນຊຶ່ງເປັນເຈົ້າຂອງ
ແຜ່ນດິນລີໄຮໄດ້ໜີໄປເຂົ້າຄ້າຍຂອງໂມ
ໂຣໄນ, ແລະ ວິງວອນຂໍຄວາມຊ່ວຍເຫລືອ
ຈາກເພິ່ນ; ເພາະວ່າພວກເຂົາບໍ່ໄດ້ເປັນ
ຝ່າຍຜິດ.
28 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາຜູ້ຄົນຂອງໂມຣິອານທັນ, ຊຶ່ງຜູ້ນຳຊື່
ວ່າ ໂມຣິອານທັນໄດ້ຍິນວ່າຜູ້ຄົນຂອງລີໄຮ
ໄດ້ໜີເຂົ້າໄປຄ້າຍຂອງໂມໂຣໄນ, ພວກ
ເຂົາຈຶ່ງມີຄວາມຢ້ານກົວຫລາຍເພາະຢ້ານ
ວ່າກອງທັບຂອງໂມໂຣໄນຈະມາໂຈມຕີ
ພວກເຂົາ ແລະ ທຳລາຍພວກເຂົາ.
29 ສະນັ້ນ, ໂມຣິອານທັນຈຶ່ງໃຫ້ຄົນ
ເຫລົ່ານັ້ນຈຳໃສ່ໃຈວ່າຕ້ອງໜີໄປຫາແຜ່ນ
ດິນທີ່ຢູ່ທາງເໜືອ, ຊຶ່ງມັນມີແມ່ນ້ຳອັນ
ກວ້າງໃຫຍ່ປົກຄຸມຢູ່, ເພື່ອຈະໄດ້ເຂົ້າໄປ
ເປັນເຈົ້າຂອງແຜ່ນດິນຊຶ່ງຢູ່ທາງເໜືອນັ້ນ.
30 ແລະ ຈົ່ງເບິ່ງ, ພວກເຂົາເຮັດໃຫ້
ແຜນການນີ້ເປັນຜົນສຳເລັດ, (ຊຶ່ງເປັນ
ເຫດໃຫ້ມີການເສົ້າສະຫລົດໃຈເກີດຂຶ້ນ)
ແຕ່ຈົ່ງເບິ່ງ, ໂມຣິອານທັນໂດຍທີ່ເປັນຄົນ
ທະເຍີທະຍານ, ສະນັ້ນລາວຈຶ່ງໃຈຮ້າຍ
ໃຫ້ຂ້າໃຊ້ຜູ້ຍິງຄົນໜຶ່ງຂອງລາວ, ແລະ ໄດ້

23 *ກ* ມຊຢ 2:41.

25 *ກ* ຄມພ ຂັດແຍ້ງ, ການຂັດແຍ້ງ.

ທຸບຕີນາງຢ່າງສາຫັດ.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື ນາງ
ໄດ້ລັກໜີ, ແລະ ຂ້າມໄປຫາຄ້າຍຂອງໂມ
ໂຣໄນ, ແລະ ບອກໃຫ້ໂມໂຣໄນຮູ້ທຸກສິ່ງ
ທຸກຢ່າງກ່ຽວກັບເລື່ອງທີ່ເກີດຂຶ້ນ, ແລະ
ເຈດຕະນາຂອງພວກເຂົາວ່າ ພວກເຂົາຈະ
ໜີໄປຫາແຜ່ນດິນທາງເໜືອ.
32 ບັດນີ້ຈົ່ງເບິ່ງ, ຜູ້ຄົນຊຶ່ງຢູ່ໃນແຜ່ນດິນ
ອຸດົມສົມບູນ, ຫລື ຄວາມຈິງແລ້ວໂມໂຣໄນ
ຢ້ານວ່າຜູ້ຄົນຈະເຊື່ອຟັງຄຳເວົ້າຂອງໂມຣິ
ອານທັນ ແລະ ຈະເຂົ້າໄປຮ່ວມກັບພວກ
ເຂົາ, ແລະ ພວກເຂົາຈະໄດ້ເປັນເຈົ້າຂອງ
ແຜ່ນດິນແຫ່ງຕ່າງໆ, ເພາະມັນອາດຈະ
ເປັນພື້ນຖານໃຫ້ເກີດຜົນຮ້າຍໃນບັນດາຜູ້
ຄົນຂອງນີໄຟ, ດັ່ງນັ້ນ, ຜົນຮ້າຍນັ້ນຈະນຳ
ໄປຫາການລົບລ້າງ [ກ]ເສລີພາບຂອງພວກ
ເຂົາ.
33 ສະນັ້ນ ໂມໂຣໄນຈຶ່ງໄດ້ສົ່ງກອງທັບ
ຂອງພວກເຂົາໄປ, ເພື່ອສະກັດຜູ້ຄົນຂອງ
ໂມຣິອານທັນໃຫ້ຢຸດການໜີໄປຫາແຜ່ນ
ດິນທາງເໜືອ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກທະຫານບໍ່ໄດ້ສະກັດພວກເຂົາ ຈົນ
ວ່າພວກເຂົາມາເຖິງຊາຍແດນຂອງແຜ່ນ
ດິນ [ກ]ຮ້າງ; ແລະ ບ່ອນນັ້ນພວກທະຫານ
ໄດ້ສະກັດພວກເຂົາໃກ້ທາງແຄບບ່ອນໜຶ່ງ
ຊຶ່ງຢູ່ລຽບຝັ່ງທະເລໄປຫາແຜ່ນດິນທາງ
ເໜືອ, ແທ້ຈິງແລ້ວ, ໃກ້ທະເລທາງຕາເວັນ
ຕົກ ແລະ ທາງຕາເວັນອອກ.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກອງທັບທີ່ໂມໂຣໄນສົ່ງໄປນັ້ນໄດ້ຖືກນຳ
ພາໂດຍຄົນຜູ້ໜຶ່ງຊື່ວ່າ ທີອານຄຳ, ແລະ
ໄດ້ພົບກັບຜູ້ຄົນຂອງໂມຣິອານທັນ; ແລະ
ຜູ້ຄົນຂອງໂມຣິອານທັນນີ້ເປັນຄົນດື້ດ້ານ
ຫລາຍທີ່ສຸດ, (ໂດຍຖືກຈູງໃຈດ້ວຍຄວາມ
ຊົ່ວຮ້າຍ ແລະ ຄຳຍົກຍ້ອງຂອງລາວ) ຈົນ
ວ່າມີການສູ້ຮົບເກີດຂຶ້ນລະຫວ່າງຄົນເຫລົ່າ
ນີ້, ຈຶ່ງເປັນເຫດໃຫ້ທີອານຄຳຂ້າໂມຣິອານ
ທັນ, ແລະ ທີອານຄຳໄດ້ນຳເອົາພວກເຂົາ
ມາເປັນຊະເລີຍ ແລະ ກັບຄືນໄປຄ້າຍຂອງ
ໂມໂຣໄນ. ແລະ ປີທີຊາວສີ່ແຫ່ງການປົກ
ຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້
ສິ້ນສຸດລົງດັ່ງນີ້.
36 ແລະ ຜູ້ຄົນຂອງໂມຣິອານທັນໄດ້ຖືກ
ນຳເອົາກັບຄືນມາດັ່ງນີ້. ແລະ ພວກເຂົາ
ໃຫ້ເຮັດຄຳໝັ້ນສັນຍາວ່າ ຈະຮັກສາສັນຕິ
ພາບຂອງພວກເຂົາໄວ້ ແລະ ພວກເຂົາຖືກ
ນຳກັບຄືນໄປຫາແຜ່ນດິນໂມຣິອານທັນຄື
ເກົ່າ, ແລະ ການຮ່ວມກັນລະຫວ່າງພວກ
ເຂົາກັບຜູ້ຄົນຂອງລີໄຮກໍເກີດຂຶ້ນ; ແລະ
ພວກເຂົາກໍຖືກນຳກັບຄືນສູ່ແຜ່ນດິນຂອງ
ຕົນຄືເກົ່າ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີດຽວກັນນີ້ຜູ້ຄົນຂອງນີໄຟກໍໄດ້ມີສັນຕິສຸກ
ກັບຄືນມາຫາຕົນເອງເໝືອນເດີມ, ຄືນີໄຟ
ຮາຜູ້ເປັນຫົວໜ້າຜູ້ຕັດສິນຄົນທີສອງໄດ້
ສິ້ນຊີວິດໄປ, ໂດຍໄດ້ກະທຳໜ້າທີ່ໃນບັນ
ລັງຕັດສິນດ້ວຍຄວາມຮອບຄອບຢ່າງສົມ
ບູນຕໍ່ພຣະພັກຂອງພຣະເຈົ້າ.
38 ເຖິງຢ່າງໃດກໍຕາມ, ເພິ່ນໄດ້ປະຕິ
ເສດທີ່ຈະຮັບເອົາບັນທຶກເຫລົ່ານັ້ນຈາກ
ແອວມາ ແລະ ສິ່ງເຫລົ່ານັ້ນ ຊຶ່ງແອວມາ
ແລະ ບັນພະບຸລຸດຂອງເພິ່ນຖືວ່າສັກສິດທີ່
ສຸດ; ສະນັ້ນ ແອວມາຈຶ່ງໄດ້ມອບມັນໄວ້ກັບ
ຮີລາມັນລູກຊາຍຂອງເພິ່ນ.
39 ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື
ລູກຊາຍຂອງນີໄຟຮາໄດ້ຖືກແຕ່ງຕັ້ງໃຫ້
ຮັບໜ້າທີ່ນັ່ງບັນລັງຕັດສິນແທນພໍ່ຂອງ

32 *ກ* ຄນພ ເສລີພາບ.

34 *ກ* ແອວ 46:17.

ເພິ່ນ; ແທ້ ຈິງ ແລ້ວ, ເພິ່ນ ຖືກ ແຕ່ງ ຕັ້ງ ໃຫ້ເປັນຫົວໜ້າຜູ້ຕັດສິນ ແລະ ຜູ້ປົກຄອງຜູ້ຄົນດ້ວຍຄຳສາບານ ແລະ ພິທີການອັນສັກສິດທີ່ຈະຕັດສິນໂດຍຄວາມຊອບທຳ, ແລະ ຈະຮັກສາສັນຕິພາບ ແລະ ອິດສະລະພາບຂອງຜູ້ຄົນ, ແລະ ຈະໃຫ້ສິດທິອັນສັກສິດຂອງພວກເຂົາໃນການນະມັດສະການພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແທ້ຈິງແລ້ວ, ໃນການສະໜັບສະໜູນ ແລະ ດຳລົງຮັກສາອຸດົມການຂອງພຣະເຈົ້າຕະຫລອດວັນເວລາຂອງເພິ່ນ, ແລະ ໃນການນຳຄົນຊົ່ວມາສູ່ຄວາມຍຸດຕິທຳຕາມການກະທຳຄວາມຜິດຂອງພວກເຂົາ.

40 ບັດນີ້ຈົ່ງເບິ່ງ, ເພິ່ນມີຊື່ວ່າ ເພໂຮຣັນ. ແລະ ເພໂຮຣັນກໍໄດ້ຮັບເອົາຕຳແໜ່ງຈາກບິດາຂອງເພິ່ນ ແລະ ໄດ້ເລີ່ມການປົກຄອງຂອງເພິ່ນໃນທ້າຍປີທີຊາວສີ່ເພື່ອດູແລຜູ້ຄົນຂອງນີໄຟ.

## ບົດທີ 51

*ກຸ່ມນິຍົມກະສັດໄດ້ຊອກຫາວິທີທາງທີ່ຈະປ່ຽນແປງກົດໝາຍ ແລະ ສະຖາປະນາໃຫ້ມີກະສັດຂຶ້ນ—ເພໂຮຣັນ ແລະ ກຸ່ມອິດສະລະໄດ້ຮັບການສະໜັບສະໜູນຈາກສຽງຂອງຜູ້ຄົນ—ໂມໂຣໄນບັງຄັບໃຫ້ກຸ່ມນິຍົມກະສັດປ້ອງກັນເສລີພາບຂອງຕົນ ຖ້າບໍ່ດັ່ງນັ້ນພວກເຂົາຈະຖືກປະຫານຊີວິດ—ອະມາລີໄຄຢາ ແລະ ຊາວເລມັນໄດ້ຍຶດເອົາຫລາຍຫົວເມືອງທີ່ເປັນເຂດດ່ານໄປ—ທີອານຄຳຂັບໄລ່ຊາວເລມັນຜູ້ທີ່ມາຮຸກຮານອອກໄປ ແລະ ໄດ້ຂ້າອະມາລີໄຄຢາຢູ່ໃນຜ້າເຕັ້ນຂອງລາວ. ປະມານ 67–66 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີຊາວຫ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ມັນໄດ້ມີການສະຖາປະນາສັນຕິພາບລະຫວ່າງຜູ້ຄົນຂອງລີໄຮ ແລະ ຜູ້ຄົນຂອງໂມຣິອານທັນກ່ຽວກັບແຜ່ນດິນຂອງພວກເຂົາ, ແລະ ກໍເລີ່ມຕົ້ນປີທີຊາວຫ້າດ້ວຍສັນຕິສຸກດັ່ງນີ້.

2 ເຖິງຢ່າງໃດກໍຕາມ, ສັນຕິສຸກນັ້ນບໍ່ຍືນຍາວໃນແຜ່ນດິນເລີຍ, ເພາະວ່າມັນເລີ່ມມີການຂັດແຍ້ງກັນຂຶ້ນໃນບັນດາຜູ້ຄົນກ່ຽວກັບຫົວໜ້າຜູ້ຕັດສິນເພໂຮຣັນ; ເພາະຈົ່ງເບິ່ງ, ຄົນສ່ວນໜຶ່ງປາດຖະໜາຢາກປ່ຽນແປງຂໍ້ຄວາມສອງສາມຂໍ້ຢູ່ໃນກົດໝາຍ.

3 ແຕ່ຈົ່ງເບິ່ງ, ເພໂຮຣັນບໍ່ຍອມປ່ຽນແປງຫລື ຍອມໃຫ້ກົດໝາຍນັ້ນປ່ຽນແປງໄປ; ສະນັ້ນ, ເພິ່ນຈຶ່ງບໍ່ເຊື່ອຟັງພວກທີ່ສົ່ງໃບຄຳຮ້ອງມາກ່ຽວກັບການປ່ຽນແປງກົດໝາຍນີ້.

4 ສະນັ້ນ, ພວກທີ່ປາດຖະໜາຢາກປ່ຽນແປງກົດຈຶ່ງຄຽດແຄ້ນໃຫ້ເພິ່ນ, ແລະ ບໍ່ຢາກໃຫ້ເພິ່ນເປັນຫົວໜ້າຜູ້ຕັດສິນປົກຄອງແຜ່ນດິນອີກຕໍ່ໄປ; ສະນັ້ນ ມັນຈຶ່ງມີການໂຕ້ຖຽງກັນຂຶ້ນກ່ຽວກັບເລື່ອງນີ້, ແຕ່ບໍ່ເຖິງຂັ້ນມີການນອງເລືອດກັນ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກທີ່ປາດຖະໜາຈະໃຫ້ເພໂຮຣັນຖືກປົດອອກຈາກບັນລັງຕັດສິນຖືກເອີ້ນວ່າກຸ່ມນິຍົມກະສັດ, ເພາະວ່າພວກເຂົາຕ້ອງການທີ່ຈະປ່ຽນແປງກົດໝາຍໃນວິທີທີ່ຈະໂຄ່ນລົ້ມການປົກຄອງແບບອິດສະລະ ແລະ ເພື່ອຈະໄດ້ສະຖາປະນາໃຫ້ມີກະສັດຂຶ້ນປົກຄອງແຜ່ນດິນ.

6 ແລະ ຜູ້ທີ່ປາດຖະໜາໃຫ້ເພໂຮຣັນເປັນຫົວໜ້າຕັດສິນປົກຄອງແຜ່ນດິນຕໍ່ໄປກໍຮັບເອົາຊື່ວ່າ ກຸ່ມອິດສະລະ, ແລະ ການແບ່ງແຍກໃນບັນດາພວກເຂົາຈຶ່ງເປັນໄປແບບນີ້, ເພາະກຸ່ມອິດສະລະໄດ້ສາບານຫລື ໃຫ້ພັນທະສັນຍາວ່າ ພວກເຂົາຈະດຳ

ລົງຮັກສາສິດທິຂອງພວກເຂົາ ແລະ ສິດ
ທິພິເສດຂອງສາດສະໜາຂອງພວກເຂົາ
ໂດຍການປົກຄອງແບບອິດສະລະ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເລື່ອງ
ທີ່ພວກເຂົາຂັດແຍ້ງກັນນັ້ນໄດ້ມາຕົກລົງ
ກັນ ໄດ້ ໂດຍ ສຽງ ຂອງຜູ້ຄົນ. ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ສຽງຂອງຜູ້ຄົນມາ
ທາງຂ້າງກຸ່ມອິດສະລະ, ແລະ ເພໂຮຣັນ
ຈຶ່ງໄດ້ຢູ່ໃນບັນລັງຕັດສິນຕໍ່ໄປ ຊຶ່ງເຮັດໃຫ້
ຜູ້ຄົນຊື່ນຊົມຫລາຍໃນບັນດາພີ່ນ້ອງຂອງ
ເພໂຮຣັນ ແລະ ຜູ້ຄົນຢ່າງຫລວງຫລາຍທີ່
ຢູ່ໃນເສລີພາບກໍຊື່ນຊົມຄືກັນ, ຊຶ່ງເຮັດໃຫ້
ກຸ່ມນິຍົມກະສັດມິດງຽບລົງ, ຈົນວ່າພວກ
ເຂົາບໍ່ກ້າຄັດຄ້ານນອກຈາກຈຳຕ້ອງດຳລົງ
ຮັກສາອຸດົມການແຫ່ງອິດສະລະພາບໄວ້.
8 ບັດນີ້ກຸ່ມນິຍົມກະສັດເປັນພວກທີ່ຢູ່ໃນ
[ກ]ຕະກຸນສູງ, ແລະ ພວກເຂົາພະຍາຍາມທີ່
ຈະຂຶ້ນເປັນກະສັດ; ແລະ ພວກເຂົາໄດ້ຮັບ
ການສະໜັບສະໜູນໂດຍຜູ້ທີ່ສະແຫວງຫາ
ອຳນາດ ແລະ ສິດອຳນາດເພື່ອປົກຄອງຜູ້
ຄົນ.
9 ແຕ່ຈົ່ງເບິ່ງ, ຕອນນີ້ເປັນເວລາທີ່ອັນຕະ
ລາຍຫລາຍທີ່ຈະມີການຂັດແຍ້ງກັນໃນບັນ
ດາຜູ້ຄົນຂອງນີໄຟ; ເພາະຈົ່ງເບິ່ງ, ອະມາ
ລີໄຄຢາໄດ້ປຸກລະດົມໃຈຂອງຊາວເລມັນ
ໃຫ້ຕໍ່ຕ້ານຜູ້ຄົນຊາວນີໄຟອີກ, ແລະ ລາວ
ໄດ້ເຕົ້າໂຮມເອົາທະຫານຈາກທຸກແຫ່ງຫົນ
ໃນແຜ່ນດິນ, ເພື່ອໃຫ້ພວກເຂົາຈັບອາວຸດ,
ແລະ ຕຽມເຮັດສົງຄາມດ້ວຍສຸດຄວາມພາກ
ພຽນ; ເພາະວ່າລາວໄດ້ [ກ]ສາບານໄວ້ວ່າ
ລາວຈະກິນເລືອດຂອງໂມໂຣໄນໃຫ້ໄດ້.
10 ແຕ່ຈົ່ງເບິ່ງ, ພວກເຮົາຈະເຫັນວ່າ ຄຳ
ສັນຍາທີ່ລາວເຮັດໄວ້ນັ້ນບໍ່ຮອບຄອບ; ເຖິງ
ຢ່າງໃດກໍຕາມ, ລາວຍັງໄດ້ຕຽມຕົວ ແລະ
ຕຽມກອງທັບຂອງລາວເພື່ອຈະມາຕໍ່ສູ້ກັບ
ຊາວນີໄຟ.
11 ບັດນີ້ກອງທະຫານຂອງລາວບໍ່ມີກຳ
ລັງຫລາຍດັ່ງທີ່ເຄີຍມີມາກ່ອນ, ຍ້ອນວ່າ
ຫລາຍພັນຖືກຂ້າຕາຍໄປດ້ວຍມືຂອງຊາວ
ນີໄຟ; ເຖິງແມ່ນວ່າພວກເຂົາມີການສູນ
ເສຍຢ່າງໜັກກໍຕາມ, ອະມາລີໄຄຢາຍັງໄດ້
ເຕົ້າໂຮມກອງທັບອັນໃຫຍ່ໄດ້ຢ່າງແປກປະ
ຫລາດໃຈ, ເຖິງຂະໜາດທີ່ລາວບໍ່ມີຄວາມ
ຢ້ານກົວເລີຍທີ່ຈະລົງມາຫາແຜ່ນດິນເຊຣາ
ເຮັມລາ.
12 ແທ້ຈິງແລ້ວ, ຕົວອະມາລີໄຄຢາເອງ
ທີ່ເປັນຫົວໜ້າກອງທັບຊາວເລມັນ. ແລະ
ມັນ ເປັນ ປີທີຊາວຫ້າ ແຫ່ງການ ປົກຄອງ
ຂອງຜູ້ຕັດສິນ; ແລະ ເປັນເວລາດຽວກັນ
ກັບຕອນທີ່ຊາວນີໄຟເລີ່ມຕົກລົງກັນໄດ້ໃນ
ເລື່ອງການງານຂອງການຂັດແຍ້ງກ່ຽວກັບ
ເພໂຮຣັນຫົວໜ້າຜູ້ຕັດສິນນັ້ນ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກທີ່ມີຊື່ວ່າກຸ່ມນິຍົມກະສັດໄດ້ຍິນວ່າ
ຊາວເລມັນກຳລັງຍົກທັບລົງມາສູ້ຮົບກັບ
ຕົນ, ພວກເຂົາຈຶ່ງມີຄວາມຊື່ນຊົມຢູ່ໃນໃຈ;
ແລະ ພວກເຂົາບໍ່ຍອມຈັບອາວຸດ, ເພາະ
ວ່າພວກເຂົາຄຽດແຄ້ນໃຫ້ຫົວໜ້າຜູ້ຕັດ
ສິນ ແລະ [ກ]ຜູ້ຄົນແຫ່ງເສລີພາບ, ຈົນວ່າ
ພວກເຂົາບໍ່ຍອມຈັບອາວຸດເພື່ອປ້ອງກັນ
ປະເທດຊາດຂອງຕົນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາໂມໂຣໄນເຫັນສິ່ງນີ້, ແລະ ເຫັນອີກ
ວ່າຊາວເລມັນກຳລັງມາຮອດຊາຍແດນ
ຂອງແຜ່ນດິນ, ເພິ່ນກໍໃຈຮ້າຍຢ່າງໃຫຍ່,
ຍ້ອນວ່າຄວາມດື້ດ້ານຂອງພວກເຂົາ ຜູ້ຊຶ່ງ
ເພິ່ນໄດ້ອອກແຮງຢ່າງພາກພຽນທີ່ສຸດເພື່ອ
ປ້ອງກັນພວກເຂົາໄວ້; ແທ້ຈິງແລ້ວ, ເພິ່ນ

**51** 8 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
9 *ກ* ແອວ 49:26–27.
13 *ກ* ແອວ 46:10–16.

ຄຽດແຄ້ນຫລາຍທີ່ສຸດ ຈົນວ່າຈິດວິນຍານ
ຂອງເພິ່ນເຕັມໄປດ້ວຍຄວາມຄຽດແຄ້ນຕໍ່
ພວກເຂົາ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ສົ່ງ ໃບຄຳຮ້ອງຕາມສຽງຂອງຜູ້ຄົນໄປ
ຫາຜູ້ປົກຄອງແຜ່ນດິນ, ໂດຍປາດຖະໜາ
ໃຫ້ ເພິ່ນອ່ານ ມັນ ແລະ ມອບອຳນາດ ໃຫ້
ແກ່ ເພິ່ນ (ໂມ ໂຣໄນ) ເພື່ອ ຈະ ໄດ້ບັງຄັບ
ຜູ້ທີ່ແຍກອອກໄປ ເຫລົ່ານັ້ນ ໃຫ້ປ້ອງກັນ
ປະເທດຊາດຂອງຕົນ ຖ້າບໍ່ດັ່ງນັ້ນກໍຂໍອະນຸ
ຍາດໃຫ້ຂ້າພວກເຂົາຖິ້ມເສຍ.
16 ເພາະ ມັນ ເປັນ ຄວາມເອົາໃຈໃສ່ປະ
ການ ທຳອິດ ຂອງ ເພິ່ນ ທີ່ ຈະ ໃຫ້ການ ຂັດ
ແຍ້ງ ແລະ ການ ແຕກແຍກກັນຍຸດຕິລົງ;
ເພາະ ຈົ່ງ ເບິ່ງ, ເລື່ອງ ແບບ ນີ້ ໄດ້ນຳເອົາ
ຄວາມພິນາດທັງໝົດມາຫາພວກເຂົາມາ
ກ່ອນແລ້ວ. ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ມັນໄດ້ຮັບອະນຸຍາດຕາມສຽງຂອງຜູ້ຄົນ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ສັ່ງໃຫ້ກອງທັບຂອງເພິ່ນຍົກໄປ
ຕໍ່ສູ້ກັບກຸ່ມນິຍົມກະສັດເພື່ອດຶງເອົາຄວາມ
ທະນົງຕົວ, ແລະ ຄວາມມັກໃຫຍ່ໄຝ່ສູງ
ຂອງພວກເຂົາລົງມາ, ແລະ ໃຫ້ພວກເຂົາ
ມາຢູ່ລະດັບດຽວກັບ ໂລກ, ຫລື ໃຫ້ພວກ
ເຂົາຈັບອາວຸດເພື່ອສະໜັບສະໜູນອຸດົມ
ການແຫ່ງເສລີພາບ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງ
ທະຫານໄດ້ອອກເດີນທາງໄປສູ້ຮົບກັບກຸ່ມ
ນິຍົມກະສັດ; ແລະ ພວກເຂົາໄດ້ດຶງເອົາ
ຄວາມທະນົງຕົວ ແລະ ຄວາມມັກໃຫຍ່ໄຝ່
ສູງຂອງພວກເຂົາລົງມາ, ເຖິງຂະໜາດທີ່
ໃນຂະນະທີ່ພວກເຂົາຍົກອາວຸດແຫ່ງສົງ
ຄາມຂຶ້ນຕໍ່ສູ້ກັບຄົນຂອງໂມໂຣໄນ ພວກ
ເຂົາຖືກໂຄ່ນລົງ ແລະ ຖືກໃຫ້ຢູ່ໃນລະດັບ
ດຽວກັບໂລກ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ກຜູ້
ທີ່ແຍກອອກໄປຈຳນວນສີ່ພັນຄົນຖືກໂຄ່ນ
ລົງດ້ວຍດາບ; ແລະ ພວກຜູ້ນຳຂອງພວກ
ເຂົາທີ່ບໍ່ຖືກຂ້າໃນການສູ້ຮົບນັ້ນກໍໄດ້ຖືກ
ຈັບເຂົ້າຄຸກ, ເພາະວ່າມັນບໍ່ມີເວລາທີ່ຈະພິ
ຈາລະນາຄະດີໃນເວລານັ້ນ.
20 ແລະ ພວກທີ່ແຍກອອກໄປທີ່ເຫລືອ
ຢູ່ນັ້ນ ຢ້ານວ່າຕົວເອງຈະຖືກຂ້າຖິ້ມ, ຈຶ່ງ
ຍອມຕໍ່ຄັນປ້າຍແຫ່ງເສລີພາບ, ແລະ ຖືກ
ບັງຄັບ ໃຫ້ປັກ ກປ້າຍ ແຫ່ງເສ ລີ ພາບ ໄວ້
ເທິງຫໍສູງ ແລະ ຢູ່ໃນເມືອງຂອງພວກເຂົາ,
ແລະ ໃຫ້ຈັບອາວຸດປ້ອງກັນປະເທດຊາດ
ຂອງຕົນ.
21 ແລະ ໂມໂຣໄນໄດ້ເຮັດໃຫ້ກຸ່ມນິຍົມ
ກະສັດສິ້ນສຸດລົງດັ່ງນີ້, ຈົນວ່າບໍ່ມີຜູ້ໃດຮູ້
ຈັກກັນອີກເລີຍໃນຊື່ວ່າກຸ່ມນິຍົມກະສັດ;
ແລະ ເພິ່ນໄດ້ເຮັດໃຫ້ຄວາມດື້ດ້ານ ແລະ
ຄວາມທະນົງຕົວຂອງພວກທີ່ອ້າງວ່າຕົນ
ມາຈາກສາຍເລືອດຂອງຊຸນນາງຜູ້ໃຫຍ່ໄດ້
ສິ້ນສຸດລົງດັ່ງນີ້; ແລ້ວພວກເຂົາຖືກນຳລົງ
ມາໃຫ້ຖ່ອມຕົວຄືກັນກັບພີ່ນ້ອງຂອງພວກ
ເຂົາ, ແລະ ຍິນດີທີ່ຈະຕໍ່ສູ້ຢ່າງກ້າຫານເພື່ອ
ອິດສະລະພາບ ແລະ ເພື່ອອິດສະລະພາບ
ຂອງພວກເຂົາຈາກຄວາມເປັນທາດ.
22 ຈົ່ງ ເບິ່ງ, ເຫດ ການ ໄດ້ບັງ ເກີດຂຶ້ນ
ຄື ຂະນະທີ່ ກໂມໂຣໄນກຳລັງເຮັດໃຫ້ເສິກ
ເສືອ ແລະ ການຂັດແຍ້ງໃນບັນດາຜູ້ຄົນ
ສິ້ນສຸດລົງ ແລະ ໃຫ້ພວກເຂົາຫັນມາຫາ
ສັນຕິພາບ ແລະ ມາຫາຄວາມສີວິໄລ, ແລະ
ຕັ້ງຂໍ້ບັງຄັບເພື່ອຕຽມສົງຄາມຕໍ່ສູ້ກັບຊາວ
ເລມັນນັ້ນ, ຈົ່ງເບິ່ງ, ຊາວເລມັນໄດ້ເຂົ້າມາ
ໃນແຜ່ນດິນໂມໂຣໄນກ່ອນແລ້ວ, ຊຶ່ງຢູ່ໃນ
ຊາຍແດນໃກ້ຝັ່ງທະເລ.

19 *ກ* ແອວ 60:16.
20 *ກ* ແອວ 46:12–13.
22 *ກ* ຄນພ ໂມໂຣໄນ, ນາຍທັບ.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ນີໄຟທີ່ຢູ່ໃນເມືອງໂມໂຣໄນບໍ່ມີກຳລັງແຂງ
ແຮງພຽງພໍ; ສະນັ້ນ ອະມາລີໄຄຢາຈຶ່ງໄດ້
ຂັບໄລ່ ແລະ ຂ້າຜູ້ຄົນເປັນຈຳນວນຫລວງ
ຫລາຍ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ອະມາລີໄຄຢາໄດ້ຍຶດເອົາເມືອງນັ້ນ, ແທ້
ຈິງແລ້ວ, ເມືອງນີ້ເປັນສູນກາງໃຫຍ່ຂອງ
ຄ້າຍຍາມທັງໝົດຂອງຊາວນີໄຟ.
24 ແລະ ຜູ້ຄົນຂອງເມືອງໂມໂຣໄນກໍໄດ້
ໜີມາຫາເມືອງນີໄຟຮາ; ແລະ ຜູ້ຄົນຂອງ
ເມືອງລີໄຮໄດ້ມາເຕົ້າໂຮມກັນເພື່ອຕຽມຕໍ່ສູ້
ແລະ ພ້ອມທີ່ຈະຮັບມືກັບຊາວເລມັນຄືກັນ.
25 ແຕ່ເຫດການໄດ້ບັງເກີດຂຶ້ນຄື ອະມາ
ລີໄຄຢາບໍ່ຍອມໃຫ້ຊາວເລມັນຍົກທັບໄປສູ້
ຮົບກັບເມືອງນີໄຟຮາ, ແຕ່ໃຫ້ຕັ້ງທັບຢູ່ໃກ້
ຝັ່ງທະເລ, ໂດຍຈັດໃຫ້ມີທະຫານຍາມເພື່ອ
ປ້ອງກັນ ແລະ ຮັກສາເມືອງນັ້ນໄວ້.
26 ແລະ ລາວໄດ້ຍຶດເອົາຫລາຍຫົວ
ເມືອງເຊັ່ນ ເມືອງນີໄຟຮາ, ເມືອງລີໄຮ,
ແລະ ເມືອງໂມຣິອານທັນ, ແລະ ເມືອງ
ອອມເນີ, ແລະ ເມືອງກິດ, ແລະ ເມືອງມິວ
ເລັກ, ຊຶ່ງທັງໝົດນີ້ຕັ້ງຢູ່ຕາມຊາຍແດນໃກ້
ຝັ່ງທະເລທາງຕາເວັນອອກ.
27 ຊາວເລມັນໄດ້ຍຶດເອົາຫລາຍຫົວ
ເມືອງມາໄດ້ດັ່ງນີ້, ຕາມເລ່ຫລ່ຽມຂອງອະ
ມາລີໄຄຢາ, ແລະ ດ້ວຍກຳລັງທະຫານອັນ
ນັບບໍ່ຖ້ວນຂອງລາວ ຊຶ່ງຫົວເມືອງເຫລົ່າ
ນີ້ໄດ້ຮັບ [ກ]ການເສີມສ້າງໃຫ້ແໜ້ນໜາຂຶ້ນ
ດ້ວຍຄວາມສາມາດຂອງໂມໂຣໄນ; ແລະ
ມັນຈຶ່ງເຮັດໃຫ້ຊາວເລມັນມີທີ່ໝັ້ນຂອງຕົນ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ເດີນທາງໄປຫາຊາຍແດນ
ຂອງແຜ່ນດິນອຸດົມສົມບູນ ແລະ ໄດ້ຕ້ອນ
ເອົາຊາວນີໄຟໄປທາງໜ້າພວກເຂົາ ແລະ
ໄດ້ຂ້າຫລາຍຄົນ.
29 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ພົບກັບທີອານຄຳ, ຜູ້ທີ່ [ກ]ຂ້າໂມຣິ
ອານທັນນັ້ນ ຜູ້ທີ່ສະກັດຜູ້ຄົນຂອງລາວ
ຕອນທີ່ພວກເຂົາແຕກໜີໄປ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື
ລາວໄດ້ສະກັດອະມາລີໄຄຢາໄວ້, ຂະນະ
ທີ່ລາວກຳລັງເດີນທັບມາພ້ອມດ້ວຍກຳລັງ
ທະຫານອັນຫລວງຫລາຍຂອງລາວ ເພື່ອ
ຈະໄດ້ເຂົ້າຍຶດເອົາແຜ່ນດິນອຸດົມສົມບູນ,
ແລະ ແຜ່ນດິນທາງເໜືອເປັນຫົວເມືອງຂຶ້ນ
ນຳອີກ.
31 ແຕ່ຈົ່ງເບິ່ງ ອະມາລີໄຄຢາຕ້ອງຜິດ
ຫວັງ ໂດຍຖືກທີອານຄຳພ້ອມດ້ວຍ ທະ
ຫານຂອງລາວຕີໂຕ້ຕອບ, ເພາະວ່າພວກ
ເຂົາເຫລົ່ານັ້ນ ເປັນ ນັກຮົບ ທີ່ ຍິ່ງໃຫຍ່;
ເພາະວ່າທະຫານຂອງທີອານຄຳທຸກຄົນ
ແຂງແຮງກວ່າຊາວເລມັນໃນດ້ານກຳລັງ
ແລະ ມີຄວາມຊຳນານໃນດ້ານການສູ້ຮົບ,
ເຖິງຂະໜາດທີ່ພວກເຂົາໄດ້ຊະນະຊາວ
ເລມັນ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ຮາວີພວກນັ້ນ, ເຖິງຂະໜາດ
ທີ່ພວກເຂົາໄດ້ຂ້າຟັນພວກນັ້ນຈົນຄ່ຳ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ທີອານຄຳ
ແລະ ທະຫານຂອງລາວໄດ້ຕັ້ງຜ້າເຕັ້ນພັກ
ຢູ່ໃນຊາຍແດນຂອງແຜ່ນດິນອຸດົມສົມບູນ;
ແລະ ອະມາລີໄຄຢາໄດ້ຕັ້ງຜ້າເຕັ້ນຂອງ
ລາວຂຶ້ນທີ່ຊາຍແດນໃນຫາດຊາຍແຄມຝັ່ງ
ທະເລ, ແລະ ພວກນັ້ນຖືກຕ້ອນມາດັ່ງນີ້.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຕອນກາງຄືນ, ທີອານຄຳ ແລະ ຂ້າໃຊ້ຂອງ
ລາວໄດ້ລັກອອກໄປທາງນອກ ແລະ ເຂົ້າ
ໄປໃນຄ້າຍຂອງອະມາລີໄຄຢາ; ແລະ ຈົ່ງ

27 *ກ* ແອວ 48:8–9.
29 *ກ* ແອວ 50:35.

ເບິ່ງ, ພວກເຂົານອນຫລັບສະໜິດຍ້ອນວ່າ
ຄວາມອ່ອນເພຍທີ່ໄດ້ຕໍ່ສູ້ກັນໝົດມື້ ແລະ
ຄວາມຮ້ອນໃນຕອນກາງເວັນ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື ທີ
ອານຄຳໄດ້ລັກເຂົ້າໄປໃນຜ້າເຕັ້ນຂອງ
ກະສັດຢ່າງລັບໆ, ແລະ ຊັດຫອກເຂົ້າໃສ່
ກາງຫົວໃຈຂອງກະສັດ; ແລະ ລາວໄດ້ເຮັດ
ໃຫ້ກະສັດຕາຍຄາທີ່ໂດຍບໍ່ໄດ້ເຮັດໃຫ້ຂ້າ
ໃຊ້ຂອງກະສັດຮູ້ເມື່ອຄືງເລີຍ.
35 ແລະ ລາວໄດ້ກັບຄືນໄປຫາຄ້າຍ
ຂອງລາວຢ່າງລັບໆ, ແລະ ຈົ່ງເບິ່ງ, ທະ
ຫານຂອງລາວກຳລັງນອນຫລັບຢູ່, ແລະ
ລາວໄດ້ປຸກພວກເຂົາໃຫ້ຕື່ນຂຶ້ນ ແລະ ໄດ້
ເລົ່າເຫດການໃຫ້ພວກເຂົາຟັງເຖິງເລື່ອງ
ທັງໝົດທີ່ລາວໄດ້ເຮັດໄປນັ້ນ.
36 ແລະ ລາວໄດ້ໃຫ້ກອງທັບທະຫານ
ຂອງລາວຕຽມພ້ອມໄວ້, ຍ້ອນວ່າຊາວ
ເລມັນຈະຕື່ນຂຶ້ນ ແລະ ຈະຍົກທັບມາໂຈມ
ຕີພວກເຂົາ.
37 ແລະ ປີທີຊາວຫ້າແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້; ແລະ ວັນເວລາຂອງອະມາລີ
ໄຄຢາເອງກໍໄດ້ສິ້ນສຸດລົງໄປເຊັ່ນດຽວກັນ.

## ບົດທີ 52

*ອາມໂມຣອນຂຶ້ນແທນອະມາລີໄຄຢາໃນ
ຖານະເປັນກະສັດຂອງຊາວເລມັນ—
ໂມໂຣໄນ, ທີອານຄຳ, ແລະ ລີໄຮ ນຳພາ
ຊາວນີໄຟເພື່ອເອົາຊະນະສົງຄາມກັບຊາວ
ເລມັນ—ເມືອງມິວເລັກຖືກຍຶດກັບຄືນມາ,
ແລະ ຢາໂຄບຊາວໂຊຣຳຖືກຂ້າຕາຍ. ປະ
ມານ 66–64 ປີກ່ອນ ຄ.ສ.*

1 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ໃນປີທີຊາວຫົກແຫ່ງການປົກຄອງຂອງ
ຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ຈົ່ງເບິ່ງ,
ເວລາຊາວເລມັນຕື່ນຂຶ້ນມາໃນຕອນເຊົ້າ,
ຊຶ່ງເປັນມື້ທຳອິດຂອງເດືອນໜຶ່ງ, ຈົ່ງເບິ່ງ,
ພວກເຂົາໄດ້ເຫັນອະມາລີໄຄຢາຕາຍຢູ່ໃນ
ຜ້າເຕັ້ນຂອງລາວ; ແລະ ພວກເຂົາກໍໄດ້
ເຫັນອີກວ່າ ທີອານຄຳຕຽມພ້ອມແລ້ວທີ່ຈະ
ສູ້ຮົບກັບພວກເຂົາໃນມື້ນັ້ນ.
2 ແລະ ບັດນີ້, ເວລາຊາວເລມັນເຫັນດັ່ງ
ນີ້ແລ້ວ ພວກເຂົາກໍຕົກໃຈ ແລະ ມີຄວາມ
ຢ້ານກົວຫລາຍ; ແລະ ພວກເຂົາຈຶ່ງໄດ້ລົ້ມ
ເລີກແຜນການຂອງພວກເຂົາທີ່ຈະເດີນ
ທັບໄປຫາແຜ່ນດິນທາງເໜືອ, ແລະ ພວກ
ເຂົາໄດ້ຖອຍກອງທັບທັງໝົດເຂົ້າໄປໃນ
ເມືອງມິວເລັກ, ແລະ ເຂົ້າໄປຫາທີ່ກຳບັງ
ໃນຄ້າຍຂອງພວກເຂົາ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງອະມາລີໄຄຢາໄດ້ຖືກແຕ່ງຕັ້ງໃຫ້
ເປັນກະສັດປົກຄອງຜູ້ຄົນ; ແລະ ລາວມີ
ຊື່ວ່າ ອາມໂມຣອນ; ກະສັດອາມໂມຣອນ
ນ້ອງຊາຍຂອງກະສັດອະມາລີໄຄຢາຈຶ່ງໄດ້
ຖືກແຕ່ງຕັ້ງໃຫ້ປົກຄອງແທນດັ່ງນີ້.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ອາມ
ໂມຣອນໄດ້ສັ່ງໃຫ້ຜູ້ຄົນປົກຄອງຫົວເມືອງ
ເຫລົ່ານັ້ນໄວ້, ເພາະພວກເຂົາໄດ້ເມືອງ
ເຫລົ່ານັ້ນມາດ້ວຍການເສຍເລືອດເນື້ອ;
ເພາະກ່ອນທີ່ພວກເຂົາຈະໄດ້ເມືອງໃດມາ
ພວກເຂົາຕ້ອງໄດ້ນອງເລືອດຢ່າງຫລວງ
ຫລາຍ.
5 ແລະ ບັດນີ້, ທີອານຄຳເຫັນວ່າຊາວ
ເລມັນຕັ້ງໃຈທີ່ຈະຮັກສາເມືອງເຫລົ່ານັ້ນ
ແລະ ພາກສ່ວນຕ່າງໆຂອງແຜ່ນດິນທີ່
ພວກເຂົາໄດ້ມາ, ແລະ ໂດຍທີ່ໄດ້ເຫັນ
ຄວາມຫລວງຫລາຍຂອງຈຳນວນຜູ້ຄົນ, ທີ
ອານຄຳຈຶ່ງຄິດວ່າມັນບໍ່ສົມຄວນທີ່ລາວຈະ
ເຂົ້າໂຈມຕີພວກເຂົາໃນຄ້າຍເຫລົ່ານັ້ນ.
6 ແຕ່ລາວໄດ້ຈັດວາງກຳລັງທະຫານ
ຂອງລາວໄວ້ໂດຍຮອບ, ຄືກັນກັບວ່າກຳ

ລັງຕຽມເຮັດເສິກ; ແທ້ຈິງແລ້ວ, ລາວກຳລັງຕຽມປ້ອງກັນຕົວໃຫ້ພົ້ນຈາກພວກນັ້ນ, ໂດຍ *ກ*ສ້າງກຳແພງຂຶ້ນໂດຍຮອບ ແລະ ຕຽມບ່ອນຕັ້ງກຳລັງໄວ້.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ຕຽມສົງຄາມຢູ່ສະເໝີ ຈົນກວ່າໂມໂຣໄນສົ່ງທະຫານຈຳນວນຫລວງຫລາຍໄປເພີ່ມກຳລັງຂອງລາວ.

8 ແລະ ໂມໂຣໄນໄດ້ອອກຄຳສັ່ງມາຫາລາວອີກວ່າ ລາວຄວນກັກຂັງຊະເລີຍເສິກທັງໝົດທີ່ຕົກຢູ່ໃນກຳມືຂອງລາວໄວ້; ເພາະວ່າຊາວເລມັນໄດ້ຈັບເອົາຊະເລີຍເສິກເປັນຈຳນວນຫລວງຫລາຍໄປ, ຄືລາວຕ້ອງກັກຂັງຊະເລີຍເສິກຂອງຊາວເລມັນທັງໝົດໄວ້ເພື່ອເປັນການໄຖ່ເອົາພວກທີ່ຊາວເລມັນໄດ້ຈັບໄປນັ້ນ.

9 ແລະ ເພິ່ນໄດ້ສັ່ງມາອີກວ່າ ລາວຄວນຕັ້ງດ່ານຄ້າຍໄວ້ໃນແຜ່ນດິນອຸດົມສົມບູນ, ແລະ ຍຶດເສັ້ນທາງ *ກ*ແຄບຊຶ່ງເຊື່ອມຕໍ່ຊຶ່ງນຳໄປສູ່ແຜ່ນດິນທາງເໜືອໄວ້, ຖ້າບໍ່ດັ່ງນັ້ນ ຊາວເລມັນຈະຍຶດເອົາຈຸດນັ້ນ ແລະ ຈະມີອຳນາດລົບກວນພວກເຂົາທຸກໆດ້ານ.

10 ແລະ ໂມໂຣໄນສັ່ງມາຫາລາວອີກ, ໂດຍປາດຖະໜາຢາກໃຫ້ລາວໝັ້ນຄົງຢູ່ໃນການປົກປັກຮັກສາແຜ່ນດິນສ່ວນນີ້ ແລະໃຫ້ພະຍາຍາມຫາໂອກາດໂດຍທຸກວິທີທາງທີ່ຈະສ້າງຄວາມເສຍຫາຍໃຫ້ແກ່ຊາວເລມັນໃນແຜ່ນດິນສ່ວນນີ້ໃຫ້ຫລາຍທີ່ສຸດເທົ່າທີ່ຈະມີກຳລັງເຮັດໄດ້ ເພື່ອວ່າລາວຈະໄດ້ຍຶດເມືອງຕ່າງໆຄືນມາ ເຖິງແມ່ນວ່າມັນຈະໄດ້ມາໂດຍກົນອຸບາຍເລ່ຫລ່ຽມ ຫລືໂດຍວິທີໃດກໍຕາມ; ແລະ ໃຫ້ລາວຕັ້ງຄ້າຍ ແລະ ເສີມກຳລັງຂຶ້ນຕາມຫົວເມືອງຕ່າງໆທີ່ຍັງບໍ່ໄດ້ຕົກຢູ່ໃນກຳມືຂອງຊາວເລມັນເທື່ອ.

11 ແລະ ເພິ່ນໄດ້ບອກລາວວ່າ, ຂ້າພະເຈົ້າຢາກມາຫາທ່ານ, ແຕ່ຈົ່ງເບິ່ງ, ຊາວເລມັນໄດ້ເຂົ້າມາໂຈມຕີພວກເຮົາຢູ່ທາງຊາຍແດນຂອງແຜ່ນດິນໃກ້ທະເລທາງຕາເວັນຕົກ; ແລະ ຈົ່ງເບິ່ງ, ຂ້າພະເຈົ້າຕ້ອງໄປຕໍ່ຕ້ານພວກເຂົາ, ສະນັ້ນ ຂ້າພະເຈົ້າຈຶ່ງມາຫາທ່ານບໍ່ໄດ້.

12 ບັດນີ້, ກະສັດ (ອາມໂມຣອນ) ໄດ້ອອກຈາກແຜ່ນດິນເຊຣາເຮັມລາໄປ, ແລະ ໄດ້ເຮັດໃຫ້ເປັນທີ່ຮູ້ແກ່ລາຊີນີກ່ຽວກັບການຕາຍຂອງອ້າຍຂອງລາວ, ແລະ ລາວໄດ້ເຕົ້າໂຮມຄົນເປັນຈຳນວນຫລວງຫລາຍ, ແລະ ໄດ້ເດີນທັບອອກໄປສູ້ຮົບກັບຊາວນີໄຟທີ່ຊາຍແດນໃກ້ທະເລທາງຕາເວັນຕົກ.

13 ແລະ ລາວພະຍາຍາມລົບກວນຊາວນີໄຟຢູ່ດັ່ງນັ້ນ, ແລະ ເພື່ອຈະຖອນກຳລັງສ່ວນໜຶ່ງຂອງພວກເຂົາໄປຍັງແຜ່ນດິນສ່ວນນັ້ນ ໃນຂະນະທີ່ລາວສັ່ງຄົນທີ່ລາວປະໄວ້ໃຫ້ດູແລເມືອງທີ່ໄດ້ມາ, ໃຫ້ພວກເຂົາລົບກວນຊາວນີໄຟຕາມຊາຍແດນໃກ້ທະເລທາງຕາເວັນອອກນຳອີກ, ແລະ ໃຫ້ເຂົ້າຍຶດເອົາແຜ່ນດິນຂອງພວກເຂົາໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ພວກເຂົາຈະເຮັດໄດ້, ຕາມກຳລັງຂອງກອງທັບຂອງຕົນ.

14 ແລະ ຊາວນີໄຟຈຶ່ງຢູ່ໃນສະພາບທີ່ເປັນອັນຕະລາຍດັ່ງນີ້ໃນທ້າຍປີທີຊາວຫົກແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.

15 ແຕ່ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນໃນປີທີຊາວເຈັດແຫ່ງການປົກຄອງຂອງຜູ້ຕັດສິນ, ຄືທີອານຄຳ, ໂດຍຄຳສັ່ງຂອງໂມ

**52** 6 *ກ* ແອວ 50:1–6; 53:3–5.
9 *ກ* ແອວ 22:32; ມມ 2:29.

ໂຣໄນ—ຜູ້ທີ່ຈັດຕັ້ງກອງທັບຂຶ້ນເພື່ອປ້ອງກັນຊາຍແດນທາງໃຕ້ ແລະ ທາງຕາເວັນຕົກຂອງແຜ່ນດິນ, ແລະ ໄດ້ເລີ່ມເດີນທັບຂອງເພິ່ນມຸ້ງໜ້າໄປຫາແຜ່ນດິນອຸດົມສົມບູນ, ເພື່ອວ່າເພິ່ນຈະໄດ້ຊ່ວຍເຫລືອທີອານຄຳ ແລະ ກອງທັບຂອງລາວໃນການໄປຕີເອົາເມືອງທີ່ສູນເສຍໄປນັ້ນຄືນມາ—

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ທີ
ອານຄຳໄດ້ຮັບຄຳສັ່ງໃຫ້ເຂົ້າຕີເອົາເມືອງມິວເລັກ, ແລະ ໃຫ້ຕີເອົາມັນຄືນມາຖ້າຫາກເປັນໄປໄດ້.

17 ແລະ ເຫດການໄດ້ບັງເກີດຂຶ້ນຄື ທີ
ອານຄຳໄດ້ຕຽມພ້ອມທີ່ຈະເຂົ້າໂຈມຕີເມືອງມິວເລັກ, ແລະ ໄດ້ອອກເດີນທາງພ້ອມດ້ວຍກອງທະຫານຂອງລາວເພື່ອໄປສູ້ຮົບກັບຊາວເລມັນ; ແຕ່ລາວເຫັນວ່າມັນເປັນໄປບໍ່ໄດ້ທີ່ຈະເອົາຊະນະພວກສັດຕູໃນຂະນະທີ່ພວກນັ້ນຢູ່ໃນບ່ອນປ້ອງກັນຂອງພວກເຂົາ; ສະນັ້ນ ລາວຈຶ່ງໄດ້ລົ້ມເລີກແຜນການຂອງລາວ ແລະ ກັບຄືນໄປຫາເມືອງອຸດົມສົມບູນຄືເກົ່າ, ເພື່ອລໍຖ້າການມາຂອງໂມໂຣໄນ, ເພື່ອລາວຈະໄດ້ຮັບກຳລັງເພີ່ມກອງທັບຂອງລາວອີກ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ມາຮອດແຜ່ນດິນອຸດົມສົມບູນພ້ອມດ້ວຍກອງທັບຂອງເພິ່ນ, ໃນຕອນທ້າຍປີທີຊາວເຈັດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.

19 ແລະ ໃນຕົ້ນປີທີຊາວແປດ, ໂມໂຣໄນ
ແລະ ທີອານຄຳພ້ອມດ້ວຍຫົວໜ້ານາຍທະຫານຫລາຍຄົນໄດ້ມີກອງປະຊຸມປຶກສາຫາລືກັນເລື່ອງສົງຄາມ—ວ່າພວກຕົນຈະເຮັດແນວໃດ ເພື່ອຈະໃຫ້ຊາວເລມັນອອກມາສູ້ຮົບກັບຕົນ; ຫລື ຊອກຫາວິທີໃດວິທີໜຶ່ງທີ່ຈະລໍ້ໃຫ້ພວກນັ້ນອອກມາຈາກທີ່ໝັ້ນຂອງພວກເຂົາ, ເພື່ອຕົນຈະໄດ້ປາບສັດຕູ ແລະ ຍຶດເອົາເມືອງມິວເລັກນັ້ນກັບຄືນມາ.

20 ແລະ ເຫດການໄດ້ບັງເກີດຂຶ້ນ ພວກ
ເຂົາໄດ້ສົ່ງຄະນະທູດໄປຫາກອງທັບຂອງຊາວເລມັນ, ຊຶ່ງປົກປ້ອງເມືອງມິວເລັກຢູ່ ເພື່ອສົ່ງຄວາມໄປຫາຫົວໜ້າຂອງຊາວເລມັນຜູ້ມີຊື່ວ່າ ຢາໂຄບ, ໂດຍປາດຖະໜາໃຫ້ລາວພ້ອມດ້ວຍກອງທັບຂອງລາວອອກມາ ເພື່ອມາພົບກັບຕົນຢູ່ໃນທົ່ງພຽງຊຶ່ງຢູ່ລະຫວ່າງສອງເມືອງນັ້ນ. ແຕ່ຈົ່ງເບິ່ງຢາໂຄບຜູ້ເປັນຊາວໂຊຣຳບໍ່ຍອມອອກມາພ້ອມດ້ວຍກອງທັບຂອງລາວ, ເພື່ອພົບກັບພວກນັ້ນຢູ່ໃນບ່ອນທີ່ຮາບພຽງ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ໂມໂຣໄນໂດຍໝົດຫວັງທີ່ຈະໄດ້ພົບກັບຊາວເລມັນຢູ່ໃນບ່ອນຊຶ່ງບໍ່ມີຜູ້ໃດໄດ້ປຽບກັນ, ສະນັ້ນ, ເພິ່ນຈຶ່ງຕົກລົງໃຈເຮັດຕາມແຜນທີ່ເພິ່ນຈະຫລອກລວງຊາວເລມັນໃຫ້ອອກມາຈາກທີ່ໝັ້ນຂອງພວກເຂົາ.

22 ສະນັ້ນ ເພິ່ນຈຶ່ງໄດ້ໃຫ້ທີອານຄຳນຳ
ເອົາທະຫານຈຳນວນໜ້ອຍໜຶ່ງເດີນທັບລົງໄປໃກ້ຝັ່ງທະເລ; ແລະ ໃນຕອນກາງຄືນ ໂມໂຣໄນພ້ອມດ້ວຍກອງທັບຂອງເພິ່ນໄດ້ເດີນທັບເຂົ້າໄປໃນຖິ່ນແຫ້ງແລ້ງກັນດານທາງຕາເວັນຕົກຂອງເມືອງມິວເລັກ; ແລະ ໃນມື້ຕໍ່ມາ, ເມື່ອທະຫານຍາມຂອງຊາວເລມັນເຫັນທີອານຄຳ, ພວກເຂົາຈຶ່ງໄດ້ແລ່ນໄປບອກຢາໂຄບຜູ້ເປັນນາຍຂອງພວກເຂົາ.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກອງທັບຂອງຊາວເລມັນໄດ້ຍົກທັບມາຕໍ່ສູ້ກັບທີອານຄຳ, ໂດຍຄິດວ່າຈຳນວນຄົນຂອງລາວບໍ່ຫລາຍ ແລະ ພວກເຂົາຈະເອົາຊະນະທີອານຄຳໄດ້. ແລະ ໃນເມື່ອທີອານຄຳເຫັນກອງທັບຂອງຊາວເລມັນຍົກມາຕໍ່ສູ້ກັບຕົນ ລາວກໍເລີ່ມຖອຍທັບຂອງລາວລົງໄປຫາຫາດຊາຍທະເລຂຶ້ນໄປທາງເໜືອ.

24 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາຊາວເລມັນເຫັນວ່າທີອານຄຳຖອຍ
ໜີໄປ, ພວກເຂົາຈຶ່ງມີກຳລັງໃຈ ແລະ ໄລ່
ຕາມໄປຢ່າງບໍ່ຢຸດຢັ້ງ. ແລະ ຂະນະທີ່ທີ
ອານ ຄຳກຳ ລັງລໍ້ຊາວ ເລມັນຜູ້ກຳລັງໄລ່
ຕາມພວກເຂົາມາໂດຍບໍ່ມີປະໂຫຍດຢູ່ນັ້ນ,
ຈົ່ງເບິ່ງ, ໂມໂຣໄນກໍໄດ້ສັ່ງໃຫ້ພາກສ່ວນ
ໜຶ່ງຂອງກອງທັບຊຶ່ງຢູ່ກັບເພິ່ນຍົກເຂົ້າໄປ
ໃນເມືອງ ແລະ ເຂົ້າຍຶດເອົາເມືອງນັ້ນ.
25 ແລະ ພວກເຂົາໄດ້ເຂົ້າຍຶດເອົາເມືອງ
ດັ່ງນັ້ນ ແລະ ໄດ້ຂ້າຄົນທັງໝົດທີ່ຖືກປະໄວ້
ປ້ອງກັນເມືອງນັ້ນ, ແທ້ຈິງແລ້ວ, ໄດ້ຂ້າຄົນ
ທັງໝົດທີ່ບໍ່ຍອມມອບອາວຸດແຫ່ງສົງຄາມ
ຂອງພວກເຂົາ.
26 ແລະ ໂມໂຣໄນຈຶ່ງໄດ້ເມືອງມິວເລັກ
ຄືນມາໂດຍພາກສ່ວນໜຶ່ງຂອງກອງທັບ
ຂອງເພິ່ນດັ່ງນີ້, ໃນເວລາດຽວກັນນັ້ນ ເພິ່ນ
ໄດ້ເດີນທັບໄປພ້ອມກຳລັງທີ່ເຫລືອຢູ່ເພື່ອ
ພົບກັບຊາວເລມັນ ເວລາພວກເຂົາກັບຄືນ
ມາຈາກການໄລ່ຕາມທີອານຄຳ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນໄດ້ໄລ່ຕາມທີອານຄຳຈົນມາຮອດໃກ້
ເມືອງອຸດົມສົມບູນ, ແລະ ເມື່ອພວກເຂົາໄດ້
ພົບກັບລີໄຮ ແລະ ກອງທັບຈຳນວນໜ້ອຍ
ໜຶ່ງ, ຊຶ່ງຖືກປະໄວ້ປ້ອງກັນເມືອງອຸດົມສົມ
ບູນ.
28 ແລະ ບັດ ນີ້ ຈົ່ງ ເບິ່ງ, ເວລາ ຫົວ ໜ້າ
ນາຍ ທະຫານ ຂອງ ຊາວ ເລມັນ ເຫັນ ລີໄຮ
ພ້ອມດ້ວຍກອງທັບຂອງລາວມາຕໍ່ສູ້ກັບ
ຕົນ, ພວກເຂົາກໍໄດ້ໜີໄປດ້ວຍຄວາມສັບ
ສົນຫລາຍ, ເພາະຢ້ານວ່າພວກຕົນຈະເຂົ້າ
ເມືອງມິວເລັກບໍ່ທັນກ່ອນທີ່ລີໄຮຈະຕິດ
ຕາມມາທັນ; ເພາະວ່າພວກເຂົາອ່ອນເພຍ
ຫລາຍຍ້ອນການເດີນທັບ, ແລະ ຄົນຂອງ
ລີໄຮຍັງແຂງແຮງຢູ່.
29 ບັດ ນີ້ຊາວ ເລມັນບໍ່ຮູ້ຈັກວ່າ ໂມ ໂຣ
ໄນກຳລັງລີ້ຢູ່ທາງຫລັງຂອງຕົນພ້ອມດ້ວຍ
ກອງທັບຂອງເພິ່ນ; ແລະ ພວກເຂົາມີແຕ່
ຟາງຢ້ານລີໄຮ ແລະ ທະຫານຂອງລາວ.
30 ບັດ ນີ້ລີໄຮບໍ່ປາດຖະໜາທີ່ຈະຕິດ
ຕາມໄປໃຫ້ທັນພວກເຂົາ ຈົນກວ່າພວກ
ເຂົາຈະໄດ້ພົບກັບໂມໂຣໄນ ແລະ ກອງທັບ
ຂອງເພິ່ນເສຍກ່ອນ.
31 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກ່ອນທີ່ຊາວເລມັນຈະຖອຍໄປໄດ້ໄກ ກໍຖືກ
ຊາວນີໄຟລ້ອມໄວ້ດ້ານໜຶ່ງໂດຍທະຫານ
ຂອງ ໂມ ໂຣ ໄນ, ແລະ ອີກດ້ານໜຶ່ງແມ່ນ
ທະຫານຂອງລີໄຮ, ຊຶ່ງທັງໝົດນີ້ຍັງແຂງ
ແຮງໝົດ ແລະ ມີກຳລັງເຕັມທີ່; ແຕ່ວ່າຊາວ
ເລມັນອ່ອນເພຍຫລາຍຍ້ອນການເດີນທັບ
ມາໄກ.
32 ແລະ ໂມໂຣໄນໄດ້ສັ່ງຄົນຂອງເພິ່ນ
ໃຫ້ໂຈມຕີຊາວເລມັນຈົນວ່າພວກເຂົາຈະ
ຍອມມອບອາວຸດແຫ່ງສົງຄາມຂອງພວກ
ເຂົາໃຫ້.
33 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຢາໂຄບ ໂດຍທີ່ເປັນຜູ້ນຳຂອງຊາວເລມັນ,
ໂດຍທີ່ເປັນ [ກ]ຊາວໂຊຣຳ ແລະ ໂດຍທີ່ມີ
ວິນຍານທີ່ບໍ່ຍອມເສຍໄຊ, ລາວຈຶ່ງໄດ້ນຳ
ເອົາຊາວເລມັນອອກໄປສູ້ຮົບກັບໂມໂຣໄນ
ດ້ວຍຄວາມໂມໂຫຮ້າຍ.
34 ໂດຍທີ່ໂມໂຣໄນຢູ່ໃນເສັ້ນທາງເດີນ
ທັບຂອງພວກເລມັນ, ສະນັ້ນ ຢາໂຄບຈຶ່ງ
ຕັ້ງໃຈຈະຂ້າພວກເຂົາ ແລະ ຕີຜ່າອອກ
ໄປຫາເມືອງມິວເລັກ. ແຕ່ຈົ່ງເບິ່ງ, ໂມໂຣ
ໄນ ແລະ ທະຫານຂອງເພິ່ນມີກຳລັງຫລາຍ
ກວ່າ; ສະນັ້ນ ຊາວນີໄຟຈຶ່ງບໍ່ເປີດທາງໃຫ້
ແກ່ຊາວເລມັນ.

33 *ກ* ແອວ 31:12.

35 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ຕໍ່ສູ້ກັນຢ່າງດຸເດືອດທັງສອງ
ຝ່າຍ; ແລະ ທັງສອງຝ່າຍມີຄົນຖືກຂ້າຕາຍ
ເປັນຈຳນວນຫລວງຫລາຍ; ແທ້ຈິງແລ້ວ,
ແລະ ໂມ ໂຣ ໄນ ໄດ້ ຮັບ ບາດ ເຈັບ ແລະ
ຢາໂຄບຖືກຂ້າຕາຍ.
36 ແລະ ລີໄຮໄດ້ອ້ອມເຂົ້າຕີທາງດ້ານ
ຫລັງ ຂອງພວກສັດ ຕູດ້ວຍກອງທະຫານ
ທີ່ມີກຳລັງຂອງລາວ, ດ້ວຍຄວາມ ໂມໂຫ
ທີ່ສຸດຈົນເຮັດໃຫ້ກອງທັບຫລັງຂອງຊາວ
ເລມັນຍອມມອບອາວຸດແຫ່ງສົງຄາມຂອງ
ຕົນ; ແລະ ສ່ວນທີ່ເຫລືອຢູ່ນັ້ນກໍສັບສົນກັນ
ຢູ່ບໍ່ຮູ້ວ່າຈະໜີໄປ ຫລື ຈະຕໍ່ສູ້.
37 ບັດນີ້ໂມໂຣໄນເຫັນຄວາມສັບສົນ
ຂອງຊາວເລມັນ, ເພິ່ນຈຶ່ງໄດ້ເວົ້າກັບພວກ
ເຂົາວ່າ: ຖ້າຫາກພວກເຈົ້າຈະນຳເອົາອາ
ວຸດແຫ່ງສົງຄາມມາມອບໃຫ້ແກ່ພວກເຮົາ,
ຈົ່ງເບິ່ງ ພວກເຮົາຈະໄວ້ຊີວິດຂອງພວກ
ເຈົ້າ.
38 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາຊາວເລມັນໄດ້ຍິນຂໍ້ຄວາມນີ້ແລ້ວ,
ຫົວໜ້ານາຍທະຫານຂອງພວກ ເຂົາ ທັງ
ໝົດທີ່ບໍ່ໄດ້ຖືກຂ້າຕາຍ ຈຶ່ງໄດ້ອອກມາ
ແລະ ໂຍນອາວຸດແຫ່ງສົງຄາມໄວ້ທີ່ຕີນ
ຂອງໂມໂຣໄນ, ແລະ ໄດ້ສັ່ງໃຫ້ທະຫານ
ຂອງຕົນກະທຳແບບດຽວກັນ.
39 ແຕ່ຈົ່ງ ເບິ່ງ, ມີຫລາຍຄົນທີ່ບໍ່ຍອມ
ເຮັດ; ແລະ ພວກທີ່ບໍ່ຍອມມອບດາບຂອງ
ພວກເຂົາ ຈຶ່ງໄດ້ຖືກຈັບ ແລະ ມັດໄວ້, ແລະ
ອາວຸດແຫ່ງສົງຄາມຂອງພວກເຂົາກໍຖືກ
ຍຶດໄປຈາກພວກເຂົາ, ແລະ ພວກເຂົາໄດ້
ຖືກບັງຄັບໃຫ້ເດີນທາງພ້ອມດ້ວຍພີ່ນ້ອງ
ຂອງພວກເຂົາໄປຫາແຜ່ນດິນອຸດົມສົມ
ບູນ.
40 ແລະ ບັດນີ້ຈຳນວນຊະເລີຍເສິກທີ່
ຈັບໄດ້ນັ້ນມີຈຳນວນຫລາຍກວ່າຈຳນວນ
ຂອງຜູ້ທີ່ຖືກຂ້າຕາຍ, ແທ້ຈິງແລ້ວ, ມັນມີ
ຈຳນວນຫລາຍກວ່າຄົນທັງສອງຝ່າຍທີ່ຖືກ
ຂ້າຕາຍໄປນັ້ນ.

## ບົດທີ 53

*ຊະເລີຍເສິກຊາວເລມັນຖືກໃຊ້ໃຫ້ສ້າງ ຄ້າຍປ້ອງກັນເມືອງອຸດົມສົມບູນ—ການ ແຕກແຍກໃນບັນດາຊາວນີໄຟໄດ້ເຮັດໃຫ້ ຊາວເລມັນໄດ້ຮັບໄຊຊະນະ—ຮີລາມັນບັງ ຄັບບັນຊາຊາຍໜຸ່ມສອງພັນຄົນຜູ້ທີ່ເປັນ ພວກລູກຊາຍຂອງຜູ້ຄົນຂອງອຳໂມນ. ປະ ມານ 64–63 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ຈັດຄົນໄວ້ເພື່ອເຝົ້າຍາມຊະເລີຍ
ເສິກຊາວເລມັນ, ແລະ ໄດ້ບັງຄັບໃຫ້ພວກ
ເຂົາອອກໄປຝັງສົບຜູ້ຄົນຂອງພວກເຂົາຜູ້
ທີ່ຖືກຂ້າຕາຍ, ແທ້ຈິງແລ້ວ, ພວກເຂົາໄດ້
ຝັງສົບຂອງຊາວນີໄຟນຳອີກ; ແລະ ໂມໂຣ
ໄນໄດ້ຈັດຄົນໄວ້ເພື່ອເຝົ້າຍາມພວກເຂົາ
ໃນຂະນະທີ່ພວກເຂົາກຳລັງອອກແຮງງານ
ຢູ່ນັ້ນ.
2 ແລະ ໂມ ໂຣ ໄນ ໄດ້ ໄປ ຫາ ເມືອງ ມິວ
ເລັກ ກັບ ລີໄຮ, ແລະ ເຂົ້າຍຶດ ເອົາເມືອງ
ນີ້ ແລະ ມອບເມືອງໃຫ້ລີໄຮປົກຄອງ. ບັດ
ນີ້ຈົ່ງເບິ່ງ, ລີໄຮຜູ້ນີ້ຄືຜູ້ທີ່ສູ້ຮົບຢູ່ຮ່ວມກັບ
ໂມ ໂຣ ໄນຕະຫລອດມາໃນສະໜາມຮົບ
ທັງໝົດຂອງລາວ; ແລະ ລາວກໍເປັນຄົນ
[a]ເໝືອນດັ່ງໂມໂຣໄນ ແລະ ທັງສອງຄົນນີ້
ປິຕິຍິນດີໃນຄວາມປອດໄພຂອງກັນແລະ
ກັນ; ແທ້ຈິງແລ້ວ, ຄົນທັງສອງກໍຮັກແພງ
ກັນຫລາຍ, ແລະ ເປັນທີ່ຮັກຫອມຂອງຜູ້

**53** 2*ກ* ແອວ 48:16–17.

ຄົນຂອງນີໄຟທັງໝົດນຳອີກ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກຊາວເລມັນ ສຳເລັດການຝັງສົບຄົນ
ຕາຍຂອງພວກເຂົາ ແລະ ຂອງຊາວນີໄຟ
ແລ້ວ, ພວກເຂົາໄດ້ຖືກສົ່ງໄປຫາແຜ່ນດິນ
ອຸດົມສົມບູນ; ແລະ ທີອານຄຳ, ໂດຍຄຳສັ່ງ
ຂອງໂມໂຣໄນ, ຈຶ່ງໃຫ້ພວກເຂົາເລີ່ມອອກ
ແຮງງານ ເຮັດຄັນຄູຮອບ ແຜ່ນດິນ ຫລື
ຮອບເມືອງອຸດົມສົມບູນ.
4 ແລະ ລາວໄດ້ສັ່ງໃຫ້ພວກເຂົາສ້າງ
[ກ]ກຳແພງທີ່ເຮັດດ້ວຍທ່ອນໄມ້ຂຶ້ນຂ້າງໃນ
ຂອງຄັນຄູ; ແລະ ພວກເຂົາໄດ້ຂຸດດິນຄູນ
ໃສ່ກຳແພງທີ່ເຮັດດ້ວຍໄມ້ນັ້ນ; ແລະ ພວກ
ເຂົາໄດ້ໃຫ້ຊາວເລມັນອອກແຮງງານໄປ
ແບບນີ້ ຈົນວ່າພວກເຂົາໄດ້ເຮັດກຳແພງ
ອ້ອມເມືອງອຸດົມສົມບູນໄວ້ໂດຍຮອບ ແລະ
ມັນສູງຂຶ້ນຫລາຍດ້ວຍກຳແພງອັນແຂງ
ແກ່ນທີ່ເຮັດດ້ວຍໄມ້ທ່ອນ ແລະ ດິນ.
5 ແລະ ເມືອງນີ້ຈຶ່ງກາຍມາເປັນທີ່ໝັ້ນ
ອັນແຂງແກ່ນທີ່ສຸດນັບຕັ້ງແຕ່ເວລານັ້ນມາ;
ແລະ ພວກເຂົາໄດ້ກັກຂັງພວກຊະເລີຍ
ເສິກຊາວເລມັນໄວ້ໃນເຂດກຳແພງເມືອງ
ນີ້; ແທ້ຈິງແລ້ວ, ແມ່ນແຕ່ໃນເຂດກຳແພງ
ເມືອງຊຶ່ງຊາວນີໄຟໄດ້ໃຫ້ຊາວເລມັນສ້າງ
ຂຶ້ນດ້ວຍມືຂອງພວກເຂົາເອງ. ບັດນີ້ໂມໂຣ
ໄນຈຳຕ້ອງໃຫ້ຊາວເລມັນອອກແຮງງານ,
ເພາະວ່າມັນງ່າຍທີ່ຈະຮັກສາພວກຊະເລີຍ
ເສິກນັ້ນຂະນະທີ່ພວກເຂົາອອກແຮງງານ;
ແລະ ເພິ່ນໃຫ້ກຳລັງທັບທັງໝົດຂອງເພິ່ນ
ຕຽມພ້ອມຢູ່ເມື່ອເຖິງເວລາທີ່ເພິ່ນຈະເຂົ້າ
ໄປໂຈມຕີຊາວເລມັນ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ເອົາຊະນະກອງທັບທີ່ຍິ່ງໃຫຍ່ທີ່
ສຸດກອງໜຶ່ງຂອງຊາວເລມັນ, ແລະ ໄດ້ເຂົ້າ
ຍຶດເອົາເມືອງມິວເລັກ ຊຶ່ງເປັນທີ່ໝັ້ນອັນ
ແຂງແກ່ນທີ່ສຸດບ່ອນໜຶ່ງຂອງຊາວເລມັນ
ໃນແຜ່ນດິນນີໄຟ; ແລະ ເພິ່ນໄດ້ສ້າງຄຸກ
ຂຶ້ນສຳລັບເປັນບ່ອນກັກຂັງຊະເລີຍເສິກ
ຂອງເພິ່ນ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ບໍ່ພະຍາຍາມທີ່ຈະສູ້ຮົບກັບຊາວເລມັນອີກ
ຕໍ່ໄປໃນປີນັ້ນ, ແຕ່ເພິ່ນໃຫ້ທະຫານຂອງ
ເພິ່ນຕຽມພ້ອມທີ່ຈະເຮັດເສິກ, ແທ້ຈິງແລ້ວ,
ແລະ ໄດ້ໃຫ້ສ້າງບ່ອນປ້ອງກັນເພື່ອຕ້ານ
ທານກັບຊາວເລມັນ, ແທ້ຈິງແລ້ວ, ແລະ
ກໍໄດ້ໃຫ້ພວກຜູ້ຊາຍຊ່ວຍເຫລືອພວກແມ່
ຍິງຂອງພວກເຂົາ ແລະ ເດັກນ້ອຍຂອງ
ພວກເຂົາໃຫ້ພົ້ນຈາກຄວາມອຶດຢາກ ແລະ
ຄວາມທຸກ, ແລະ ໃຫ້ຜູ້ຄົນຈັດຫາອາຫານ
ໃຫ້ແກ່ກອງທັບຂອງຊາວນີໄຟນຳອີກ.
8 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ໃນຂະນະທີ່ໂມໂຣໄນບໍ່ໄດ້ຢູ່ນຳພວກເຂົາ
ນັ້ນ, ມັນໄດ້ມີການສວມຮູ້ຮ່ວມຄິດກັນຂຶ້ນ
ໃນບັນດາຊາວນີໄຟ ຊຶ່ງພາໃຫ້ເກີດການ
ແຕກແຍກກັນຂຶ້ນ, ດັ່ງນັ້ນ ກອງທັບຂອງ
ຊາວເລມັນຈຶ່ງໄດ້ປຽບຊາວນີໄຟຂຶ້ນມາ,
ແທ້ຈິງແລ້ວ, ເຖິງຂະໜາດທີ່ພວກເຂົາໄດ້
ເຂົ້າຄອບຄອງຫົວເມືອງຕ່າງໆທີ່ຢູ່ໃນແຜ່ນ
ດິນທາງໃຕ້ໃກ້ທະເລທາງຕາເວັນຕົກ.
9 ແລະ ນີ້ກໍຍ້ອນວ່າຄວາມຊົ່ວຮ້າຍໃນ
ບັນດາພວກເຂົາເອງ, ແທ້ຈິງແລ້ວ, ຍ້ອນ
ວ່າມັນໄດ້ມີການແຕກແຍກ ແລະ ມີການ
ສວມຮູ້ຮ່ວມຄິດກັນໃນບັນດາພວກເຂົາ
ເອງ ພວກເຂົາຈຶ່ງຕົກຢູ່ໃນສະພາບທີ່ເປັນ
ອັນຕະລາຍທີ່ສຸດ.
10 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າມີ
ບາງຢ່າງທີ່ຈະເວົ້າກ່ຽວກັບ [ກ]ຜູ້ຄົນຂອງ
ອຳໂມນ, ຊຶ່ງແຕ່ກ່ອນຜູ້ຄົນເຫລົ່ານີ້ເຄີຍ

4 ກ ແອວ 50:2–3.
10 ກ ແອວ 27:24–26.

ເປັນ ຊາວ ເລມັນ; ແຕ່ ໂດຍ ອຳໂມນ ແລະ
ພີ່ ນ້ອງ ຂອງ ເພິ່ນ, ຫລື ຈະ ເວົ້າ ວ່າ ໂດຍ
ອຳນາດ ແລະ ພຣະຄຳຂອງພຣະເຈົ້າ,
ພວກເຂົາຈຶ່ງ [ຂ]ປ່ຽນໃຈເຫລື້ອມໃສໃນພຣະ
ຜູ້ເປັນເຈົ້າ; ແລະ ພວກເຂົາຖືກນຳພາລົງ
ມາຫາແຜ່ນດິນເຊຣາເຮັມລາ ແລະ ໄດ້ຮັບ
ການຄຸ້ມຄອງຈາກຊາວນີໄຟນັບແຕ່ເວລາ
ນັ້ນມາ.
11 ແລະ ເປັນ ຍ້ອນ ຄຳ ສາບານ ຂອງ
ພວກເຂົາ, ພວກເຂົາຈຶ່ງໄດ້ເວັ້ນຈາກການ
ຈັບ ອາວຸດທີ່ ຈະຕໍ່ສູ້ກັບ ພີ່ນ້ອງຂອງຕົນ;
ເພາະພວກເຂົາເຮັດຄຳສາບານໄວ້ວ່າຈະ
ບໍ່ຂ້າຟັນ [ກ]ອີກເລີຍ; ແລະ ເພາະຕາມຄຳ
ສາບານຂອງພວກເຂົາ, ພວກເຂົາຈະຍອມ
ຕາຍ; ແທ້ຈິງແລ້ວ, ພວກເຂົາຈະຍອມຕົວ
ໃຫ້ຕົກຢູ່ໃນມືຂອງພີ່ນ້ອງຂອງພວກເຂົາ
ຖ້າຫາກບໍ່ແມ່ນເພາະຄວາມສົງສານ ແລະ
ຄວາມຮັກອັນລົ້ນເຫລືອຊຶ່ງອຳໂມນ ແລະ
ພີ່ນ້ອງຂອງເພິ່ນມີເພື່ອພວກເຂົາ.
12 ແລະ ເພາະເປັນດ້ວຍເຫດນີ້ ພວກ
ເຂົາຈຶ່ງຖືກເອົາລົງມາຫາແຜ່ນດິນເຊຣາ
ເຮັມລາ; ແລະ ພວກເຂົາຈຶ່ງໄດ້ຮັບ [ກ]ການ
ຄຸ້ມຄອງຈາກຊາວນີໄຟຕັ້ງແຕ່ນັ້ນມາ.
13 ແຕ່ເຫດການໄດ້ບັງເກີດຂຶ້ນຄື ເວລາ
ພວກເຂົາເຫັນອັນຕະລາຍ, ແລະ ຄວາມ
ທຸກ ແລະ ຄວາມຍາກລຳບາກຕ່າງໆນາໆ
ຊຶ່ງຊາວນີໄຟຕ້ອງຮັບແທນຕົນ ພວກເຂົາກໍ
ເກີດມີຄວາມເມດຕາສົງສານຂຶ້ນມາ ແລະ
[ກ]ປາດຖະໜາທີ່ຈະຈັບອາວຸດເພື່ອປ້ອງກັນ
ປະເທດຊາດຂອງຕົນ.
14 ແຕ່ຈົ່ງເບິ່ງ, ເວລາພວກເຂົາກຳລັງຈະ
ຈັບອາວຸດແຫ່ງສົງຄາມຂອງພວກເຂົາຂຶ້ນ,
ພວກເຂົາກໍຖືກຮີລາມັນ ແລະ ພີ່ນ້ອງຂອງ
ເພິ່ນຊັກຊວນບໍ່ໃຫ້ເຮັດເຊັ່ນນັ້ນ, ເພາະວ່າ
ພວກເຂົາກຳລັງຈະ [ກ]ເຮັດຜິດ [ຂ]ຄຳສາບານ
ຂອງພວກເຂົາທີ່ໄດ້ເຮັດໄວ້.
15 ແລະ ຮີລາມັນຢ້ານວ່າ ຖ້າຂືນເຮັດ,
ພວກເຂົາຈະສູນເສຍຈິດວິນຍານຂອງ
ພວກເຂົາໄປ; ສະນັ້ນ ທຸກຄົນທີ່ໄດ້ເຂົ້າຢູ່
ໃນພັນທະສັນຍານີ້ຈຶ່ງຕ້ອງທົນເບິ່ງພີ່ນ້ອງ
ຂອງຕົນລຸຍໄປກັບຄວາມທຸກຂອງພວກ
ເຂົາ, ໃນສະພາບທີ່ເປັນອັນຕະລາຍຢູ່ໃນ
ຂະນະນີ້.
16 ແຕ່ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ພວກເຂົາມີລູກຊາຍຫລາຍຄົນ, ຜູ້ຊຶ່ງບໍ່ໄດ້
ເຂົ້າຢູ່ໃນພັນທະສັນຍາວ່າຈະບໍ່ຍອມຈັບ
ອາວຸດແຫ່ງສົງຄາມເພື່ອປ້ອງກັນຕົນໃຫ້
ພົ້ນຈາກສັດຕູ; ສະນັ້ນ ພວກເຂົາຈຶ່ງໄດ້ຈັບ
ອາວຸດ, ແລະ ມາເຕົ້າໂຮມກັນໃນຕອນນີ້,
ແລະ ພວກເຂົາເອີ້ນຕົວເອງວ່າ ຊາວນີໄຟ.
17 ແລະ ພວກເຂົາໄດ້ໃຫ້ພັນທະສັນຍາ
ວ່າ ພວກເຂົາຈະຕໍ່ສູ້ເພື່ອເສລີພາບຂອງ
ຊາວນີໄຟ, ແທ້ຈິງແລ້ວ, ເພື່ອປ້ອງກັນ
ແຜ່ນດິນເຖິງແມ່ນວ່າພວກເຂົາຈະຕາຍກໍ
ຕາມ; ແທ້ຈິງແລ້ວ, ພວກເຂົາໄດ້ໃຫ້ພັນທະ
ສັນຍາວ່າ ພວກເຂົາຈະບໍ່ຍອມເສຍ [ກ]ເສ
ລີພາບຂອງພວກເຂົາໄປ, ແຕ່ວ່າຈະຕໍ່ສູ້
ທຸກວິທີທາງເພື່ອຈະໄດ້ປ້ອງກັນຊາວນີໄຟ
ແລະ ປ້ອງກັນຕົວເອງໃຫ້ພົ້ນຈາກຄວາມ
ເປັນທາດ.
18 ບັດນີ້ຈົ່ງເບິ່ງ, ມີຊາຍໜຸ່ມທັງໝົດນຳ
ກັນສອງພັນຄົນ, ຊຶ່ງໄດ້ເຂົ້າຢູ່ໃນພັນທະ
ສັນຍານີ້ ແລະ ຈັບອາວຸດແຫ່ງສົງຄາມຂອງ
ພວກເຂົາຂຶ້ນເພື່ອປ້ອງກັນປະເທດຊາດ
ຂອງຕົນ.
19 ແລະ ບັດນີ້ຈົ່ງເບິ່ງ, ພວກເຂົາບໍ່ເຄີຍ

10 *ຂ* ແອວ 23:8–13.
11 *ກ* ແອວ 24:17–19.
12 *ກ* ແອວ 27:23.
13 *ກ* ແອວ 56:7.
14 *ກ* ຈບຊ 30:2.
*ຂ* ຄມພ ຄຳສາບານ.
17 *ກ* ແອວ 56:47.
ຄມພ ເສລີພາບ.

ເຮັດໃຫ້ຊາວນີໄຟເສຍຫາຍມາກ່ອນເລີຍ, ແລະ ໃນເວລານີ້ ພວກເຂົາກໍມາເປັນຝ່າຍສະໜັບສະໜູນອັນກວ້າງຂວາງອີກ. ເພາະພວກເຂົາໄດ້ຈັບອາວຸດແຫ່ງສົງຄາມຂອງພວກເຂົາຂຶ້ນ, ແລະ ພວກເຂົາຢາກໃຫ້ຮີລາມັນເປັນຜູ້ນຳຂອງພວກເຂົາ.

20 ແລະ ພວກເຂົາເປັນຊາຍໜຸ່ມທຸກຄົນ, ແລະ ພວກເຂົາເປັນຄົນ [ກ]ກ້າຫານທີ່ສຸດ, ທັງດ້ານກຳລັງ ແລະ ຄວາມວ່ອງໄວ; ແຕ່ຈົ່ງເບິ່ງ, ນີ້ຍັງບໍ່ໝົດ—ພວກເຂົາເປັນຄົນທີ່ [ຂ]ເອົາການເອົາງານຢູ່ຕະຫລອດວັນເວລາ ບໍ່ວ່າອັນໃດກໍຕາມທີ່ພວກເຂົາໄດ້ຮັບມອບໝາຍ.

21 ແທ້ຈິງແລ້ວ, ພວກເຂົາເປັນຄົນຊື່ສັດ ແລະ ມີສະຕິປັນຍາຫລາຍ, ເພາະວ່າພວກເຂົາໄດ້ຮັບການສິດສອນໃຫ້ຮັກສາພຣະບັນຍັດຂອງພຣະເຈົ້າ ແລະ ໃຫ້ [ກ]ເດີນໄປຢ່າງພາກພູມໃຈຕໍ່ພຣະພັກຂອງພຣະອົງ.

22 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຮີລາມັນໄດ້ເດີນທັບເປັນຜູ້ນຳກອງທະຫານໜຸ່ມ [ກ]ສອງພັນຄົນຂອງເພິ່ນໄປຊ່ວຍຜູ້ຄົນທີ່ຊາຍແດນຂອງແຜ່ນດິນທາງໃຕ້ໃກ້ທະເລທາງຕາເວັນຕົກ.

23 ແລະ ປີທີຊາວແປດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

## ບົດທີ 54

*ອາມໂມຣອນ ແລະ ໂມໂຣໄນເຈລະຈາກັນເພື່ອແລກປ່ຽນຊະເລີຍເສິກ—ໂມໂຣໄນສັ່ງໃຫ້ຊາວເລມັນຖອນອອກໄປ ແລະ ຢຸດຕິການໂຈມຕີອັນປ່າເຖື່ອນລົງ—ອາມໂມຣອນສັ່ງໃຫ້ຊາວນີໄຟວາງອາວຸດຂອງພວກເຂົາ ແລະ ໃຫ້ມາຂຶ້ນກັບຊາວເລມັນ. ປະມານ 63 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີຊາວເກົ້າແຫ່ງການປົກຄອງຂອງຜູ້ຕັດສິນ, ຄື [ກ]ອາມໂມຣອນໄດ້ສົ່ງຄຳຂໍຮ້ອງໄປຫາໂມໂຣໄນ ໂດຍປາດຖະໜາທີ່ຈະແລກປ່ຽນຊະເລີຍເສິກກັນ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນຮູ້ສຶກປິຕິຍິນດີຢ່າງຍິ່ງໃນຄຳຂໍຮ້ອງນີ້ ເພາະວ່າເພິ່ນດີໃຈທີ່ຈະໄດ້ສະບຽງອາຫານທີ່ເອົາໄປລ້ຽງຊະເລີຍເສິກຊາວເລມັນນັ້ນມາລ້ຽງຜູ້ຄົນຂອງເພິ່ນເອງ; ແລະ ເພິ່ນດີໃຈທີ່ຈະໄດ້ຜູ້ຄົນຂອງເພິ່ນຄືນມາເສີມກຳລັງກອງທັບຂອງເພິ່ນນຳອີກ.

3 ບັດນີ້ຊາວເລມັນໄດ້ຈັບເອົາພວກແມ່ຍິງ ແລະ ເດັກນ້ອຍຫລາຍຄົນໄປເປັນຊະເລີຍເສິກ, ແຕ່ຊະເລີຍເສິກທັງໝົດຂອງໂມໂຣໄນ, ຫລື ວ່າພວກຊະເລີຍເສິກທີ່ໂມໂຣໄນຈັບມາບໍ່ມີພວກແມ່ຍິງ ຫລື ເດັກນ້ອຍຈັກຄົນເລີຍ; ສະນັ້ນໂມໂຣໄນຈຶ່ງຕົກລົງໃຈໃຊ້ກົນອຸບາຍເພື່ອຈະໄດ້ຊະເລີຍເສິກຊາວນີໄຟຈາກຊາວເລມັນ ໃຫ້ຫລາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

4 ສະນັ້ນ ເພິ່ນຈຶ່ງໄດ້ຂຽນສານສະບັບໜຶ່ງ, ແລະ ສົ່ງໄປນຳຂ້າໃຊ້ຂອງອາມໂມຣອນ, ຊຶ່ງເປັນຜູ້ດຽວກັນກັບຜູ້ທີ່ຖືສານມາໃຫ້ໂມໂຣໄນ. ບັດນີ້ ນີ້ຄືຂໍ້ຄວາມຊຶ່ງເພິ່ນໄດ້ຂຽນເຖິງອາມໂມຣອນ, ມີຄວາມວ່າ:

5 ຈົ່ງເບິ່ງ ອາມໂມຣອນ, ຂ້າພະເຈົ້າຂຽນຫາທ່ານກ່ຽວກັບສົງຄາມເທື່ອນີ້ ຊຶ່ງທ່ານເປັນຜູ້ສ້າງຂຶ້ນຕໍ່ຜູ້ຄົນຂອງຂ້າພະເຈົ້າ, ຫລື

20 *ກ* ຄມພ ກ້າຫານ, ຄວາມກ້າຫານ, ຢ່າງກ້າຫານ.
*ຂ* ຄມພ ຊື່ສັດ, ຄວາມຊື່ສັດ.
21 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
22 *ກ* ແອວ 56:3–5.
**54** 1 *ກ* ແອວ 52:3.

ວ່າແທ້ຈິງແລ້ວ [ກ]ອ້າຍຂອງທ່ານເປັນຜູ້ສ້າງ
ຂຶ້ນມາ, ແລະ ຊຶ່ງທ່ານຍັງຕັ້ງໃຈທີ່ຈະເຮັດຢູ່
ຕໍ່ໄປ ເຖິງແມ່ນວ່າອ້າຍຂອງທ່ານໄດ້ຕາຍ
ໄປແລ້ວ.
6 ຈົ່ງເບິ່ງ, ຂ້າພະເຈົ້າຈະບອກທ່ານບາງ
ຢ່າງກ່ຽວກັບ [ກ]ຄວາມຍຸດຕິທຳຂອງພຣະ
ເຈົ້າ, ແລະ ດາບແຫ່ງພຣະພິໂລດທີ່ຊົງລິດ
ອຳນາດຍິ່ງໃຫຍ່ຂອງພຣະອົງ, ຊຶ່ງແຂວນ
ຢູ່ເທິງຫົວຂອງທ່ານ ຖ້າຫາກທ່ານບໍ່ກັບໃຈ
ແລະ ຖອນກອງທັບຂອງທ່ານກັບຄືນໄປ
ແຜ່ນດິນຂອງທ່ານເອງ, ຫລືວ່າແຜ່ນດິນທີ່
ທ່ານເປັນເຈົ້າຂອງ, ຄືແຜ່ນດິນນີໄຟນັ້ນ.
7 ແທ້ຈິງແລ້ວ, ຂ້າພະເຈົ້າຈະບອກທ່ານ
ເຖິງເລື່ອງນີ້ ຖ້າຫາກທ່ານສາມາດທີ່ຈະ
ເຊື່ອຟັງມັນ; ແທ້ຈິງແລ້ວ, ຂ້າພະເຈົ້າຈະ
ບອກທ່ານກ່ຽວກັບ [ກ]ນະລົກອັນເປັນຕາ
ຢ້ານທີ່ຄອຍຮັບ [ຂ]ຄາດຕະກອນຄືກັນກັບ
ຕົວທ່ານເອງ ຊຶ່ງອ້າຍຂອງທ່ານໄດ້ຮັບຢູ່
ໃນຂະນະນີ້, ຖ້າຫາກທ່ານບໍ່ກັບໃຈ ແລະ
ລົ້ມເລີກຈຸດປະສົງອັນເປັນຄາດຕະກຳນັ້ນ
ເສຍ, ແລະ ກັບຄືນໄປຫາແຜ່ນດິນຂອງ
ທ່ານເອງພ້ອມດ້ວຍກອງທັບຂອງທ່ານ.
8 ແຕ່ຖ້າຫາກທ່ານເຄີຍປະຕິເສດສິ່ງ
ເຫລົ່ານີ້ມາກ່ອນແລ້ວ, ແລະ ເຄີຍໄດ້ຕໍ່ສູ້ກັບ
ຜູ້ຄົນຂອງພຣະຜູ້ເປັນເຈົ້າມາກ່ອນແລ້ວ,
ຂ້າພະເຈົ້າຮູ້ວ່າ ທ່ານກໍຈະເຮັດສິ່ງນີ້ອີກ.
9 ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາໄດ້ຕຽມ
ພ້ອມແລ້ວທີ່ຈະຮັບມືກັບທ່ານ; ແທ້ຈິງ
ແລ້ວ, ຖ້າຫາກທ່ານບໍ່ລົ້ມເລີກຈຸດປະສົງ
ຂອງທ່ານເສຍ, ຈົ່ງເບິ່ງ, ທ່ານຈະດຶງເອົາ
ພຣະພິໂລດຂອງພຣະເຈົ້າລົງມາເທິງທ່ານ
ຊຶ່ງເປັນອົງທີ່ທ່ານບໍ່ຍອມຮັບ, ຈົນວ່າທ່ານ
ໄປສູ່ຄວາມພິນາດ.
10 ແຕ່ວ່າ, ຕາບໃດທີ່ພຣະຜູ້ເປັນເຈົ້າ
ຊົງພຣະຊົນຢູ່, ກອງທັບຂອງຂ້າພະເຈົ້າຈະ
ຍົກມາຕີທ່ານ ຖ້າຫາກທ່ານບໍ່ຖອຍກັບໄປ
ເສຍກ່ອນ, ແລະ ໃນບໍ່ຊ້ານີ້ ຄວາມຕາຍຈະ
ມາຢ້ຽມຢາມທ່ານ ເພາະພວກເຮົາຈະຮັກ
ສາເມືອງ ແລະ ແຜ່ນດິນຂອງພວກເຮົາໄວ້
ໃຫ້ໝັ້ນຄົງ; ແທ້ຈິງແລ້ວ, ແລະ ພວກເຮົາ
ຈະຮັກສາສາດສະໜາຂອງພວກເຮົາ ແລະ
ອຸດົມການຂອງພຣະເຈົ້າຂອງພວກເຮົາຕໍ່
ໄປ.
11 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຄິດວ່າ ຂ້າ
ພະເຈົ້າເວົ້າກັບທ່ານກ່ຽວກັບເລື່ອງເຫລົ່ານີ້
ໂດຍບໍ່ມີປະໂຫຍດ; ເພາະທ່ານເປັນ [ກ]ລູກ
ຂອງນະລົກ; ສະນັ້ນ ຂ້າພະເຈົ້າຂໍຈົບສານ
ຂອງຂ້າພະເຈົ້າໂດຍບອກທ່ານວ່າ ຂ້າພະ
ເຈົ້າຈະບໍ່ແລກປ່ຽນຊະເລີຍເສິກ, ນອກ
ຈາກໂດຍມີເງື່ອນໄຂວ່າ ທ່ານຈະສົ່ງມອບ
ຊາຍຜູ້ໜຶ່ງພ້ອມທັງເມຍຂອງລາວ ແລະ
ລູກຂອງລາວ ມາແລກກັບຊະເລີຍເສິກຜູ້
ໜຶ່ງຂອງທ່ານ; ຖ້າຫາກທ່ານເຮັດໄດ້, ຂ້າ
ພະເຈົ້າກໍຈະແລກປ່ຽນ.
12 ແລະ ຈົ່ງເບິ່ງ, ຖ້າຫາກທ່ານບໍ່ເຮັດ
ດັ່ງນັ້ນ, ຂ້າພະເຈົ້າຈະມາສູ້ຮົບກັບທ່ານ
ພ້ອມດ້ວຍກອງທັບຂອງຂ້າພະເຈົ້າ; ແທ້
ຈິງແລ້ວ, ຂ້າພະເຈົ້າຈະມອບອາວຸດໃຫ້
ແກ່ພວກຜູ້ຍິງຂອງຂ້າພະເຈົ້າ ແລະ ເດັກ
ນ້ອຍຂອງຂ້າພະເຈົ້າ, ແລະ ຂ້າພະເຈົ້າຈະ
ມາສູ້ຮົບກັບທ່ານ ແລະ ຂ້າພະເຈົ້າຈະຕິດ
ຕາມທ່ານໄປຈົນເຖິງແຜ່ນດິນຂອງທ່ານ,
ຊຶ່ງເປັນແຜ່ນດິນມູນມໍລະດົກບ່ອນທຳອິດ
[ກ]ຂອງພວກເຮົາ; ແທ້ຈິງແລ້ວ, ມັນຈະເປັນ
ເລືອດຕໍ່ເລືອດ, ແທ້ຈິງແລ້ວ, ຊີວິດຕໍ່ຊີວິດ;
ແລະ ຂ້າພະເຈົ້າຈະສູ້ຮົບກັບທ່ານ ຈົນວ່າ

5 *ກ* ແອວ 48:1.
6 *ກ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
7 *ກ* ຄມພ ນະລົກ.
*ຂ* ແອວ 47:18, 22–24. ຄມພ ຄາດຕະກຳ, ການຄາດຕະກຳ.
11 *ກ* ຢຮ 8:42–44.
12 *ກ* 2 ນຟ 5:5–8.

ທ່ານຈະຖືກທຳລາຍໃຫ້ສິ້ນໄປຈາກພື້ນ
ແຜ່ນດິນໂລກ.
13 ຈົ່ງເບິ່ງ, ຂ້າພະເຈົ້າກຳລັງຄຽດແຄ້ນ
ຢູ່, ແລະ ຜູ້ຄົນຂອງຂ້າພະເຈົ້າກໍຄືກັນ;
ທ່ານພະຍາຍາມຈະຂ້າພວກເຮົາ, ແຕ່
ພວກເຮົາພຽງແຕ່ຕໍ່ຕ້ານ ເພື່ອປ້ອງກັນຕົວ
ເທົ່ານັ້ນ. ແຕ່ຈົ່ງເບິ່ງ, ຖ້າຫາກທ່ານຍັງພະ
ຍາຍາມທຳລາຍພວກເຮົາອີກ ພວກເຮົາກໍ
ຈະພະຍາຍາມທຳລາຍທ່ານຄືກັນ; ແທ້ຈິງ
ແລ້ວ, ພວກເຮົາຈະພະຍາຍາມເອົາແຜ່ນ
ດິນຂອງພວກເຮົາຄືນມາ, ຊຶ່ງເປັນແຜ່ນດິນ
ມູນມໍລະດົກບ່ອນທຳອິດຂອງພວກເຮົາ.
14 ບັດນີ້ຂ້າພະເຈົ້າຂໍຈົບສານຂອງຂ້າ
ພະເຈົ້າພຽງເທົ່ານີ້. ຂ້າພະເຈົ້າຄືໂມໂຣໄນ;
ຊຶ່ງເປັນຜູ້ນຳຂອງຊາວນີໄຟ.
15 ບັດນີ້ ເຫດການໄດ້ບັງເກີດຂຶ້ນຄື
ອາມໂມຣອນ, ເມື່ອລາວໄດ້ຮັບສານສະບັບ
ນີ້ແລ້ວ, ລາວກໍມີຄວາມຄຽດແຄ້ນຫລາຍ;
ແລະ ລາວໄດ້ຂຽນສານສະບັບໜຶ່ງຕອບ
ໂມໂຣໄນ, ແລະ ນີ້ຄືຂໍ້ຄວາມທີ່ລາວຂຽນ,
ມີຄວາມວ່າ:
16 ຂ້າພະເຈົ້າຄືອາມໂມຣອນ, ກະສັດ
ຂອງຊາວເລມັນ; ຂ້າພະເຈົ້າເປັນນ້ອງຊາຍ
ຂອງອະມາລີໄຄຢາ ຜູ້ທີ່ທ່ານ [ກ]ລອບຂ້າ
ນັ້ນ. ຈົ່ງເບິ່ງ, ຂ້າພະເຈົ້າຈະແກ້ແຄ້ນແທນ
ເພິ່ນ, ແທ້ຈິງແລ້ວ, ແລະ ຂ້າພະເຈົ້າຈະຍົກ
ທັບມາຕີທ່ານພ້ອມດ້ວຍກອງທັບຂອງຂ້າ
ພະເຈົ້າ ເພາະວ່າຂ້າພະເຈົ້າບໍ່ໄດ້ຢ້ານຄຳ
ຂູ່ຂອງທ່ານເລີຍ.
17 ເພາະຈົ່ງເບິ່ງ, ບັນພະບຸລຸດຂອງທ່ານ
ເຮັດຜິດຕໍ່ພີ່ນ້ອງຂອງພວກເຂົາ, ເຖິງຂະ
ໜາດທີ່ພວກເຂົາໄດ້ລັກເອົາ [ກ]ສິດທິໃນ
ການປົກຄອງຂອງພວກເຂົາໄປ ໃນເມື່ອສິດ
ທິນັ້ນເປັນຂອງພວກເຂົາແລ້ວໂດຍແທ້ຈິງ.
18 ແລະ ບັດນີ້ຈົ່ງເບິ່ງ, ຖ້າຫາກທ່ານຈະ
ຍອມວາງອາວຸດຂອງທ່ານ, ແລະ ຍອມຕົວ
ໃຫ້ຜູ້ທີ່ເປັນເຈົ້າຂອງສິດທິໂດຍແທ້ຈິງມາ
ປົກຄອງ, ເວລານັ້ນຂ້າພະເຈົ້າຈະໃຫ້ຜູ້ຄົນ
ຂອງຂ້າພະເຈົ້າວາງອາວຸດ ແລະ ຈະບໍ່ກໍ່
ສົງຄາມອີກຕໍ່ໄປ.
19 ຈົ່ງເບິ່ງ, ທ່ານເວົ້າຂູ່ຂ້າພະເຈົ້າ ແລະ
ຜູ້ຄົນຂອງຂ້າພະເຈົ້າຕັ້ງຫລາຍເທື່ອ; ແຕ່
ຈົ່ງເບິ່ງ, ພວກເຮົາບໍ່ຢ້ານຄຳຂູ່ຂອງທ່ານ
ເລີຍ.
20 ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າຈະ
ອະນຸຍາດໃຫ້ແລກປ່ຽນຊະເລີຍເສິກກັນ
ຕາມຄຳຂໍຮ້ອງຂອງທ່ານດ້ວຍຄວາມຍິນ
ດີ ເພື່ອຂ້າພະເຈົ້າຈະໄດ້ເກັບອາຫານຂອງ
ຂ້າພະເຈົ້າໄວ້ສຳລັບພວກທະຫານຂອງຂ້າ
ພະເຈົ້າເອງ; ແລະ ພວກເຮົາຈະໄດ້ເຮັດ
ເສິກກັນຕໍ່ໄປ, ເພື່ອພວກເຮົາຈະໄດ້ເອົາ
ຊາວນີໄຟມາຢູ່ໃຕ້ສິດອຳນາດຂອງພວກ
ເຮົາ ຫລື ເພື່ອການສູນສິ້ນນິລັນດອນຂອງ
ພວກເຂົາ.
21 ແລະ ຄືສິ່ງທີ່ກ່ຽວກັບພຣະເຈົ້າອົງນັ້ນ
ຜູ້ຊຶ່ງທ່ານກ່າວວ່າ ພວກເຮົາບໍ່ຍອມຮັບ,
ຈົ່ງເບິ່ງ, ພວກເຮົາບໍ່ຮູ້ຈັກເລື່ອງນີ້ເລີຍ; ທັງ
ທ່ານເອງກໍບໍ່ຮູ້ຈັກຄືກັນ; ແຕ່ຖ້າຫາກຈະ
ເປັນໄປວ່າສິ່ງນີ້ມີຈິງ, ພວກເຮົາກໍບໍ່ຮູ້ຈັກ
ເຖິງຢ່າງໃດກໍຕາມ ພຣະອົງໄດ້ສ້າງພວກ
ເຮົາຂຶ້ນມາຄືກັນກັບທ່ານ.
22 ແລະ ຖ້າຫາກເປັນໄປວ່າມັນມີມານ
ແລະ ນະລົກແທ້, ຈົ່ງເບິ່ງ ພຣະອົງຈະບໍ່ສົ່ງ
ທ່ານໄປບ່ອນນັ້ນບໍ ເພື່ອວ່າທ່ານຈະໄດ້ຢູ່
ກັບອ້າຍຂອງຂ້າພະເຈົ້າ ຜູ້ທີ່ທ່ານໄດ້ລອບ
ຂ້າ, ຜູ້ທີ່ທ່ານເວົ້າວ່າເພິ່ນໄດ້ໄປຫາບ່ອນ
ນັ້ນ? ແຕ່ຈົ່ງເບິ່ງ, ເລື່ອງເຫລົ່ານີ້ບໍ່ສຳຄັນ
ເລີຍ.

16 *ກ* ແອວ 51:34.
17 *ກ* 2 ນຟ 5:1–4; ມຊຢ 10:12–17.

23 ຂ້າ ພະ ເຈົ້າ ຄື ອາມ ໂມ ຣອນ, ແລະ ເປັນຜູ້ສືບເຊື້ອສາຍຂອງ [ກ]ໂຊຣຳ, ຜູ້ທີ່ຖືກບັນພະບຸລຸດຂອງທ່ານບີບບັງຄັບ ແລະ ພາໜີມາຈາກເຢຣູຊາເລັມ.

24 ແລະ ຈົ່ງເບິ່ງບັດນີ້, ຂ້າພະເຈົ້າເປັນຊາວເລມັນຜູ້ອາດຫານ; ຈົ່ງເບິ່ງ, ສົງຄາມນີ້ມີຂຶ້ນກໍເພື່ອຈະໄດ້ແກ້ແຄ້ນຄວາມຜິດຂອງພວກເຂົາເຫລົ່ານັ້ນ, ແລະ ເພື່ອຈະໄດ້ຮັກສາສິດທິຂອງພວກເຂົາໃນການປົກຄອງ; ແລະ ຂ້າພະເຈົ້າຂໍຈົບສານຂອງຂ້າພະເຈົ້າຫາໂມໂຣໄນພຽງເທົ່ານີ້.

## ບົດທີ 55

*ໂມ ໂຣ ໄນ ປະຕິເສດບໍ່ແລກປ່ຽນຊະເລີຍເສິກ—ທະ ຫານ ຍາມ ຊາວ ເລມັນ ຖືກຫລອກໃຫ້ມຶນເມົາ, ແລະ ຊະເລີຍເສິກຊາວນີໄຟ ໄດ້ ຮັບ ການ ປົດ ປ່ອຍ—ຊາວ ນີໄຟໄດ້ຍຶດເອົາເມືອງກິດ ໂດຍບໍ່ໄດ້ເສຍເລືອດເນື້ອເລີຍ. ປະມານ 63–62 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອໂມໂຣໄນຮັບສານສະບັບນີ້ແລ້ວ ເພິ່ນກໍໃຈຮ້າຍແຮງຍິ່ງຂຶ້ນ, ເພາະເພິ່ນຮູ້ວ່າອາມໂມຣອນມີຄວາມຮູ້ໂດຍສົມບູນເຖິງ [ກ]ກົນອຸບາຍຂອງຕົນເອງ; ແທ້ຈິງແລ້ວ, ເພິ່ນຮູ້ວ່າເຫດຜົນທີ່ອາມໂມຣອນຈະເອົາມາເຮັດສົງຄາມກັບຊາວນີໄຟນັ້ນບໍ່ທ່ຽງທຳເລີຍ.

2 ແລະ ເພິ່ນໄດ້ກ່າວວ່າ: ຈົ່ງເບິ່ງ, ຂ້າພະເຈົ້າຈະບໍ່ແລກປ່ຽນຊະເລີຍເສິກກັບອາມໂມຣອນ ນອກຈາກວ່າລາວຈະລົ້ມເລີກຈຸດປະສົງຂອງລາວຕາມສານຂອງຂ້າພະເຈົ້ານັ້ນ; ເພາະວ່າຂ້າພະເຈົ້າຈະບໍ່ໃຫ້ລາວມີອຳນາດຫລາຍໄປກວ່າທີ່ລາວມີຢູ່ໃນເວລານີ້.

3 ຈົ່ງເບິ່ງ, ຂ້າພະເຈົ້າຮູ້ຈັກສະຖານທີ່ ທີ່ຊາວເລມັນກັກຂັງຜູ້ຄົນຂອງຂ້າພະເຈົ້າໄວ້ ຊຶ່ງພວກເຂົາຈັບເອົາໄປເປັນຊະເລີຍ; ແລະ ໂດຍທີ່ອາມໂມຣອນບໍ່ຍອມຮັບເງື່ອນໄຂຕາມສານຂອງຂ້າພະເຈົ້າແລ້ວ, ຈົ່ງເບິ່ງ, ຂ້າພະເຈົ້າຈະໃຫ້ລາວຕາມຄຳເວົ້າຂອງຂ້າພະເຈົ້າ; ຈົ່ງເບິ່ງ, ຂ້າພະເຈົ້າຈະຕາມຂ້າພວກເຂົາຈົນກວ່າພວກເຂົາຈະຕ້ອງຂໍສັນຕິພາບ.

4 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອໂມໂຣໄນກ່າວຂໍ້ຄວາມນີ້ແລ້ວ, ເພິ່ນສັ່ງໃຫ້ມີການກວດຄົ້ນໃນບັນດາທະຫານຂອງເພິ່ນເພື່ອເພິ່ນຈະໄດ້ພົບຜູ້ໃດຜູ້ໜຶ່ງຊຶ່ງເປັນຜູ້ສືບເຊື້ອສາຍຂອງຊາວເລມັນຢູ່ໃນບັນດາພວກຕົນ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ພົບ [ກ]ຄົນໜຶ່ງຊື່ວ່າ ເລມັນ; ແລະ ລາວເປັນຂ້າໃຊ້ຂອງກະສັດ ຜູ້ຖືກອະມາລິໄຄຢາລອບຂ້ານັ້ນ.

6 ບັດນີ້ໂມໂຣໄນສັ່ງໃຫ້ເລມັນ ແລະ ທະຫານຈຳນວນໜ້ອຍໜຶ່ງອອກໄປຫາທະຫານຍາມ ຊຶ່ງເຝົ້າຍາມຊາວນີໄຟຢູ່.

7 ບັດນີ້ຊາວນີໄຟຖືກກັກຂັງໄວ້ຢູ່ໃນເມືອງກິດ; ສະນັ້ນ ໂມໂຣໄນຈຶ່ງໄດ້ແຕ່ງຕັ້ງເລມັນໃຫ້ເອົາທະຫານຈຳນວນໜ້ອຍໜຶ່ງໄປກັບລາວ.

8 ແລະ ເມື່ອເຖິງຕອນຄ່ຳມາ ເລມັນໄດ້ໄປຫາທະຫານຍາມທີ່ເຝົ້າຍາມຊາວນີໄຟຢູ່, ແລະ ຈົ່ງເບິ່ງ, ພວກເຂົາເຫັນເລມັນເຂົ້າມາ ແລ້ວພວກທະຫານຍາມກໍຮ້ອງຂຶ້ນ; ແຕ່ລາວໄດ້ເວົ້າກັບພວກເຂົາວ່າ: ບໍ່ຕ້ອງຢ້ານ; ຈົ່ງເບິ່ງ, ຂ້ອຍກໍເປັນຊາວເລມັນ. ຈົ່ງເບິ່ງ, ພວກເຮົາໄດ້ໂຕນໜີມາຈາກຊາວນີໄຟໃນເວລາທີ່ພວກເຂົາກຳລັງນອນຫລັບຢູ່; ແລະ

23 *ກ* 1 ນຟ 4:31–35.

**55** 1 *ກ* ແອວ 47:12–35.

5 *ກ* ແອວ 47:29.

ຈົ່ງເບິ່ງ ພວກເຮົາໄດ້ລັກເອົາເຫລົ້າອະງຸ່ນ
ຂອງພວກເຂົາມານຳອີກ.

9 ບັດນີ້ເວລາຊາວເລມັນໄດ້ຍິນຂໍ້ຄວາມ
ນີ້ແລ້ວ ພວກເຂົາກໍຕ້ອນຮັບລາວດ້ວຍ
ຄວາມປິຕິຍິນດີ; ແລະ ພວກເຂົາໄດ້ເວົ້າ
ກັບລາວວ່າ: ເອົາເຫລົ້າອະງຸ່ນຂອງເຈົ້າມາ
ນີ້ ເພື່ອພວກເຮົາຈະໄດ້ດື່ມ; ພວກເຮົາດີໃຈ
ຫລາຍທີ່ເຈົ້າໄດ້ເຫລົ້າອະງຸ່ນມານຳ ເພາະ
ວ່າພວກເຮົາມີຄວາມອິດເມື່ອຍຫລາຍ.

10 ແລະ ເລມັນໄດ້ເວົ້າກັບພວກເຂົາວ່າ:
ໃຫ້ພວກເຮົາເກັບເຫລົ້າອະງຸ່ນນີ້ໄວ້ກ່ອນ
ຈົນກວ່າພວກເຮົາຈະອອກໄປສູ້ຮົບກັບ
ຊາວນີໄຟ. ແຕ່ຄຳເວົ້ານີ້ໄດ້ເຮັດໃຫ້ພວກ
ເຂົາຢາກດື່ມເຫລົ້າອະງຸ່ນຫລາຍກວ່າເກົ່າ;

11 ເພາະພວກເຂົາເວົ້າວ່າ: ພວກເຮົາມີ
ຄວາມອິດເມື່ອຍຫລາຍ, ສະນັ້ນໃຫ້ພວກ
ເຮົາດື່ມເຫລົ້າອະງຸ່ນຂອງເຈົ້າເສຍເຖີດ,
ແລະ ອີກບໍ່ດົນພວກເຮົາຈະໄດ້ຮັບເຫລົ້າ
ອະງຸ່ນທີ່ເປັນສ່ວນແບ່ງຂອງພວກເຮົາ
ແລ້ວ, ຊຶ່ງມັນຈະເຮັດໃຫ້ພວກເຮົາມີກຳລັງ
ເພີ່ມຂຶ້ນເພື່ອໄປຕໍ່ສູ້ກັບຊາວນີໄຟ.

12 ແລະ ເລມັນຈຶ່ງເວົ້າກັບພວກເຂົາວ່າ:
ຖ້າພວກເຈົ້າຢາກດື່ມກໍເຊີນຕາມສະບາຍ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ດື່ມເຫລົ້າອະງຸ່ນຢ່າງສະບາຍ;
ແລະ ພວກເຂົາພໍໃຈໃນລົດຊາດຂອງມັນ,
ສະນັ້ນ ພວກເຂົາຈຶ່ງດື່ມຕໍ່ໄປອີກຢ່າງລົ້ນ
ເລີງ; ແລະ ເຫລົ້ານັ້ນປຸກຫລາຍ, ເພາະໄດ້
ເຮັດມັນໃຫ້ປຸກແບບນັ້ນ.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ດື່ມ ແລະ ມ່ວນຊື່ນກັນ; ແລະ
ບໍ່ດົນພວກເຂົາກໍມຶນເມົາໝົດ.

15 ແລະ ບັດນີ້ເມື່ອເລມັນ ແລະ ຄົນຂອງ
ລາວເຫັນວ່າພວກນັ້ນເມົາເຫລົ້າໝົດ ແລະ
ກຳລັງນອນຫລັບສະໜິດຢູ່, ພວກເຂົາຈຶ່ງ
ໄດ້ກັບໄປຫາໂມໂຣໄນ ແລະ ເລົ່າເລື່ອງທັງ
ໝົດທີ່ເກີດຂຶ້ນໃຫ້ເພິ່ນຟັງ.

16 ແລະ ບັດນີ້ມັນໄດ້ເປັນໄປຕາມແຜນ
ການຂອງໂມໂຣໄນ. ແລະ ໂມໂຣໄນຊຶ່ງ
ໄດ້ຕຽມທະຫານຂອງເພິ່ນໄວ້ພ້ອມດ້ວຍ
ອາວຸດແຫ່ງສົງຄາມຢູ່ແລ້ວ; ແລະ ເພິ່ນໄດ້
ສົ່ງທະຫານໄປຫາເມືອງກິດຂະນະທີ່ຊາວ
ເລມັນກຳລັງນອນຫລັບສະໜິດ ແລະ ມຶນ
ເມົາຢູ່, ແລະ ເພິ່ນໄດ້ສົ່ງອາວຸດແຫ່ງສົງ
ຄາມໄປໃຫ້ຊະເລີຍເສິກນຳອີກ, ເຖິງຂະ
ໜາດທີ່ພວກເຂົາມີອາວຸດຄົບມື;

17 ແທ້ຈິງແລ້ວ, ແມ່ນແຕ່ໃຫ້ແກ່ພວກ
ແມ່ຍິງຂອງພວກເຂົາ, ແລະ ເດັກນ້ອຍທັງ
ໝົດຂອງພວກເຂົາ, ຕາມແຕ່ຄວາມສາ
ມາດທີ່ຈະໃຊ້ອາວຸດໄດ້, ເມື່ອໂມໂຣໄນໄດ້
ມອບອາວຸດໃຫ້ແກ່ຊະເລີຍເສິກທຸກຄົນ,
ແລະ ທັງໝົດນີ້ເຮັດໄປໃນຄວາມງຽບທີ່
ສຸດ.

18 ແຕ່ຖ້າຫາກພວກເຂົາເຮັດໃຫ້ພວກ
ເລມັນຕື່ນຂຶ້ນມາ, ຈົ່ງເບິ່ງ ພວກເຂົາຍັງມຶ
ນເມົາຢູ່ ແລະ ຊາວນີໄຟຕ້ອງໄດ້ຂ້າພວກ
ເຂົາຖິ້ມ.

19 ແຕ່ຈົ່ງເບິ່ງ, ນີ້ບໍ່ແມ່ນຄວາມປາດຖະ
ໜາຂອງໂມໂຣໄນເລີຍ; ເພິ່ນບໍ່ໄດ້ເບີກ
ບານຢູ່ໃນການຂ້າຟັນ ຫລື [ກ]ການນອງ
ເລືອດ, ແຕ່ເພິ່ນເບີກບານຢູ່ໃນການຊ່ວຍ
ເຫລືອຜູ້ຄົນຂອງເພິ່ນໃຫ້ພົ້ນຈາກຄວາມ
ພິນາດ; ແລະ ດ້ວຍເຫດນີ້ ເພິ່ນຈະບໍ່ໄດ້
ນຳຄວາມບໍ່ຍຸດຕິທຳມາຫາເພິ່ນເລີຍ, ເພິ່ນ
ຈຶ່ງບໍ່ຍອມໂຈມຕີຊາວເລມັນ ແລະ ທຳລາຍ
ພວກເຂົາໃນຂະນະທີ່ພວກເຂົາກຳລັງມຶນ
ເມົາຢູ່.

20 ແຕ່ເພິ່ນໄດ້ຕາມຄວາມປະສົງຂອງ

19*ກ* ແອວ 48:16.

ເພິ່ນແລ້ວ; ເພາະວ່າເພິ່ນໄດ້ມອບອາວຸດ
ໃຫ້ຊະເລີຍເສິກຊາວນີໄຟທຸກຄົນຢູ່ພາຍ
ໃນກຳແພງເມືອງ ແລະ ໃຫ້ອຳນາດ ແກ່
ພວກເຂົາທີ່ຈະໄດ້ຄວາມເປັນເຈົ້າຂອງ
ພາກສ່ວນຕ່າງໆ ຊຶ່ງຢູ່ພາຍໃນກຳແພງ
ເມືອງນັ້ນ.
21 ແລະ ຫລັງຈາກນັ້ນ ເພິ່ນໄດ້ໃຫ້ທະ
ຫານຂອງເພິ່ນຖອຍອອກໄປ, ແລະ ລ້ອມ
ກອງທັບຂອງຊາວເລມັນໄວ້.
22 ບັດນີ້ຈົ່ງເບິ່ງ ທຸກສິ່ງທຸກຢ່າງນີ້ໄດ້
ເກີດຂຶ້ນໃນຕອນກາງຄືນ, ເວລາທີ່ຊາວ
ເລມັນຕື່ນຂຶ້ນມາໃນຕອນເຊົ້າ ພວກເຂົາ
ກໍໄດ້ເຫັນວ່າຕົນເອງກຳລັງຖືກຊາວນີໄຟ
ອ້ອມໄວ້ຢູ່ຂ້າງນອກເມືອງ, ແລະ ເຫັນຊະ
ເລີຍເສິກຂອງຕົນຖືອາວຸດຢູ່ຂ້າງໃນ.
23 ແລະ ພວກເຂົາຈຶ່ງເຫັນວ່າ ຊາວນີໄຟ
ມີກຳລັງຫລາຍກວ່າພວກເຂົາ; ແລະ ໃນ
ສະພາບນີ້ ພວກເຂົາຮູ້ວ່າ ມັນບໍ່ສົມຄວນທີ່
ຈະເຂົ້າຕໍ່ສູ້ກັບຊາວນີໄຟ; ສະນັ້ນ ຫົວໜ້າ
ນາຍທະຫານຂອງພວກເຂົາຈຶ່ງໄດ້ສັ່ງເອົາ
ອາວຸດແຫ່ງສົງຄາມຂອງພວກເຂົາ, ແລະ
ພວກເຂົາໄດ້ນຳມັນອອກມາ ແລະ ໂຍນ
ມັນລົງທີ່ຕີນຂອງຊາວນີໄຟ, ວິງວອນຂໍ
ຄວາມເມດຕາສົງສານ.
24 ບັດນີ້ຈົ່ງເບິ່ງ, ນີ້ເປັນຄວາມປາດຖະ
ໜາຂອງໂມໂຣໄນ. ເພິ່ນຈຶ່ງໄດ້ເອົາພວກ
ເຂົາໄວ້ເປັນຊະເລີຍເສິກ, ແລະ ຍຶດເອົາ
ເມືອງນັ້ນ, ແລະ ໃຫ້ພວກເຂົາປ່ອຍຊະເລີຍ
ທັງໝົດຊຶ່ງເປັນຊາວນີໄຟ; ແລະ ພວກເຂົາ
ໄດ້ເຂົ້າຮ່ວມກັບກອງທັບຂອງໂມໂຣໄນ,
ແລະ ເປັນກຳລັງສຳຄັນໃນກອງທັບຂອງ
ເພິ່ນ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ສັ່ງໃຫ້ຊາວເລມັນຊຶ່ງເພິ່ນຍຶດໄວ້ເປັນ
ຊະເລີຍເລີ່ມເຮັດ [a]ວຽກງານເພື່ອດັດແປງ
ປ້ອມຍາມທົ່ວເມືອງກິດໃຫ້ມັນເຂັ້ມແຂງ
ຂຶ້ນຕື່ມອີກ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ເພິ່ນໄດ້ເສີມສ້າງເມືອງກິດຕາມຄວາມ
ປາດຖະໜາຂອງເພິ່ນແລ້ວ, ເພິ່ນກໍໄດ້ສັ່ງ
ໃຫ້ຜູ້ຄົນຂອງເພິ່ນນຳເອົາຊະເລີຍເສິກໄປ
ຫາເມືອງອຸດົມສົມບູນ; ແລະ ເພິ່ນໄດ້ຄຸ້ມ
ກັນເມືອງນັ້ນໄວ້ດ້ວຍກຳລັງທີ່ເຂັ້ມແຂງທີ່
ສຸດ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື
ທັງໆທີ່ຊາວເລມັນມີກົນອຸບາຍຫລາຍຢ່າງ,
ຊາວນີໄຟຍັງໄດ້ຮັກສາ ແລະ ປ້ອງກັນຊະ
ເລີຍເສິກທັງໝົດທີ່ພວກເຂົາຈັບໄດ້, ແລະ
ໄດ້ຮັກສາແຜ່ນດິນ ແລະ ສິ່ງນີ້ຊ່ວຍໃຫ້ໄດ້
ປຽບທັງໝົດໃນການຍຶດເອົາເມືອງຕ່າງໆ
ຂອງພວກເຂົາຄືນມາ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ນີໄຟເລີ່ມໄດ້ຮັບໄຊຊະນະອີກ, ແລະ ກູ້ເອົາ
ສິດ ແລະ ສິດທິພິເສດຂອງພວກເຂົາຄືນ
ມາ.
29 ແລະ ຫລາຍເທື່ອທີ່ຊາວເລມັນໄດ້
ພະຍາຍາມທີ່ຈະເຂົ້າລ້ອມຊາວນີໄຟໃນ
ຕອນກາງຄືນ, ແຕ່ໃນຄວາມພະຍາຍາມ
ເຫລົ່ານັ້ນ ພວກເຂົາໄດ້ເສຍຊະເລີຍເສິກ
ໄປຫລາຍຄົນ.
30 ແລະ ຫລາຍເທື່ອທີ່ຊາວເລມັນໄດ້ພະ
ຍາຍາມທີ່ຈະເກືອເຫລົ້າອະງຸ່ນຊາວນີໄຟ,
ເພື່ອຈະໄດ້ທຳລາຍພວກເຂົາເຫລົ່ານັ້ນ
ດ້ວຍຢາພິດ ຫລື ວ່າດ້ວຍຄວາມມຶນເມົາ.
31 ແຕ່ຈົ່ງເບິ່ງ, ຊາວນີໄຟບໍ່ໄດ້ຊັກຊ້າ
ທີ່ຈະ [a]ລະນຶກເຖິງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຂົາໃນເວລາທີ່ມີ
ຄວາມທຸກເລີຍ. ພວກເຂົາຈະຖືກນຳໄປຖືກ

25 *a* ແອວ 53:3–5.
31 *a* ແອວ 62:49–51.

ນ້ອງຂອງພວກເລມັນບໍ່ໄດ້; ແທ້ຈິງແລ້ວ, ພວກເຂົາຈະບໍ່ດື່ມເຫລົ້າອະງຸ່ນຂອງພວກສັດຕູ ເວັ້ນເສຍແຕ່ຈະໃຫ້ຊະເລີຍເສິກຊາວເລມັນບາງຄົນດື່ມເສຍກ່ອນ.

32 ແລະ ພວກ ເຂົາລະ ມັດ ລະ ວັງ ຢູ່ ສະເໝີ ເພື່ອບໍ່ໃຫ້ມີການຖືກວາງຢາພິດໃນບັນດາພວກເຂົາ; ເພາະຖ້າຫາກເຫລົ້າອະງຸ່ນ ເປັນ ພິດ ແກ່ຊາວເລມັນ ມັນກໍຈະເປັນພິດແກ່ຊາວນີໄຟຄືກັນ; ແລະ ຊາວນີໄຟໄດ້ລອງຊີມເຫລົ້າຂອງຊາວເລມັນແບບນີ້.

33 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄືມັນເປັນການສົມຄວນທີ່ໂມໂຣໄນຈະຕຽມພ້ອມເພື່ອເຂົ້າໂຈມຕີເມືອງໂມຣິອານທັນ; ເພາະ ຈົ່ງເບິ່ງ, ດ້ວຍ ຜົນ ງານຂອງພວກເຂົາ, ຊາວເລມັນຈຶ່ງເສີມກຳລັງເມືອງໂມຣິອານທັນຈົນວ່າມັນເປັນທີ່ໝັ້ນອັນເຂັ້ມແຂງທີ່ສຸດ.

34 ແລະ ພວກເຂົາໄດ້ນຳເອົາກຳລັງໃໝ່ເຂົ້າມາໃນເມືອງ, ແລະ ສິ່ງສະບຽງອາຫານມາເພີ່ມອີກ.

35 ແລະ ປີທີຊາວເກົ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟກໍໄດ້ສິ້ນສຸດລົງດັ່ງນີ້.

## ບົດທີ 56

*ຮີລາມັນສົ່ງສານໄປຫາໂມໂຣໄນ, ເລົ່າເຖິງສະພາບ ແຫ່ງສົງຄາມກັບຊາວ ເລມັນ—ອານທິພັດ ແລະ ຮີລາມັນໄດ້ຮັບໄຊຊະນະຈາກຊາວເລມັນ—ຊາຍໜຸ່ມສອງພັນຄົນຂອງຮີລາມັນຕໍ່ສູ້ດ້ວຍອຳນາດອັນໜ້າອັດສະຈັນໃຈ ແລະ ບໍ່ມີຜູ້ໃດຖືກຂ້າຕາຍເລີຍ. ຂໍ້ທີ 1, ປະມານ 62 ປີ ກ່ອນ ຄ.ສ.; ຂໍ້ທີ 2–19, ປະມານ 66 ປີ ກ່ອນ ຄ.ສ.; ແລະ ຂໍ້ທີ 20–57, ປະມານ 65–64 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີສາມສິບແຫ່ງການປົກຄອງຂອງຜູ້ຕັດສິນ ໃນມື້ທີສອງຂອງເດືອນໜຶ່ງ, ໂມໂຣໄນໄດ້ຮັບສານຈາກຮີລາມັນກ່າວເຖິງການງານຂອງຜູ້ຄົນໃນແຜ່ນດິນສ່ວນນັ້ນ.

2 ແລະ ນີ້ຄືຄຳເວົ້າທີ່ເພິ່ນໄດ້ຂຽນມາ, ມີຄວາມວ່າ: ໂມໂຣໄນ ອ້າຍນ້ອງທີ່ຮັກຂອງຂ້າພະເຈົ້າ, ທັງໃນພຣະຜູ້ເປັນເຈົ້າ ແລະ ທັງໃນຄວາມຍາກລຳບາກຈາກສົງຄາມຂອງພວກເຮົານີ້; ຈົ່ງເບິ່ງ, ອ້າຍນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າມີເລື່ອງຈະບອກໃຫ້ທ່ານຮູ້ຈັກກ່ຽວກັບສົງຄາມຂອງພວກເຮົາໃນແຜ່ນດິນພາກນີ້.

3 ຈົ່ງເບິ່ງ, ຊາວໜຸ່ມ [ກ]ສອງພັນຄົນເຫລົ່ານີ້ ຊຶ່ງອຳໂມນພາລົງມາຈາກແຜ່ນດິນນີໄຟ—ບັດນີ້ທ່ານຮູ້ຈັກແລ້ວວ່າ ພວກເຂົາເປັນຜູ້ສືບຕະກຸນຂອງເລມັນຜູ້ເປັນລູກຊາຍກົກຂອງລີໄຮບັນພະບຸລຸດຂອງພວກເຮົາ.

4 ບັດນີ້ຂ້າພະເຈົ້າບໍ່ຈຳເປັນຕ້ອງທວນຄືນແກ່ທ່ານກ່ຽວກັບຮີດຄອງປະເພນີຂອງພວກເຂົາ ຫລື ຄວາມບໍ່ເຊື່ອຖືຂອງພວກເຂົາ, ເພາະທ່ານເອງກໍຮູ້ຈັກເລື່ອງທັງໝົດນີ້ຢູ່ແລ້ວ—

5 ສະນັ້ນ ມັນເປັນການພຽງພໍແລ້ວທີ່ຂ້າພະເຈົ້າຈະບອກທ່ານວ່າ ຊາຍໜຸ່ມສອງພັນຄົນນີ້ໄດ້ຈັບອາວຸດແຫ່ງສົງຄາມ, ແລະ ໄດ້ຂໍໃຫ້ຂ້າພະເຈົ້າເປັນຜູ້ນຳຂອງພວກເຂົາ; ແລະ ພວກເຮົາໄດ້ຍົກອອກໄປເພື່ອປ້ອງກັນປະເທດຊາດຂອງພວກເຮົາ.

6 ແລະ ບັດນີ້ທ່ານກໍຮູ້ຈັກຢູ່ແລ້ວກ່ຽວ

**56** 3 *ກ* ແອວ 53:22.

ກັບ [ກ]ພັນທະສັນຍາຊຶ່ງບັນພະບຸລຸດຂອງ
ພວກເຂົາໄດ້ເຮັດໄວ້ວ່າ ພວກເຂົາຈະບໍ່
ຈັບອາວຸດແຫ່ງສົງຄາມເພື່ອຕໍ່ສູ້ກັບພີ່ນ້ອງ
ຂອງພວກເຂົາ.
7 ແຕ່ໃນປີທີຊາວຫົກ ເວລາພວກເຂົາ
ໄດ້ເຫັນຄວາມທຸກ ແລະ ຄວາມຍາກລຳ
ບາກທີ່ພວກເຮົາໄດ້ອົດທົນແທນພວກເຂົາ,
ພວກເຂົາເກືອບຈະ [ກ]ທຳລາຍພັນທະສັນ
ຍາ ຊຶ່ງພວກເຂົາໄດ້ເຮັດໄວ້ ແລະ ວ່າຈະ
ຈັບອາວຸດແຫ່ງສົງຄາມເພື່ອປ້ອງກັນພວກ
ເຮົາ.
8 ແຕ່ ວ່າ ຂ້າ ພະ ເຈົ້າ ບໍ່ ຍອມ ປ່ອຍ ໃຫ້
ພວກເຂົາທຳລາຍພັນທະສັນຍາທີ່ພວກ
ເຂົາໄດ້ເຮັດໄວ້, ຊຶ່ງຂ້າພະເຈົ້າຄິດວ່າພຣະ
ເຈົ້າຈະເພີ່ມກຳລັງໃຫ້ພວກເຮົາ, ເຖິງຂະ
ໜາດທີ່ພວກເຮົາບໍ່ຈຳເປັນຕ້ອງທົນທຸກ
ອີກຕໍ່ໄປ ຖ້າຫາກພວກເຂົາເຮັດຕາມຄຳ
ສາບານທີ່ພວກເຂົາໄດ້ເຮັດໄວ້.
9 ແຕ່ຈົ່ງເບິ່ງ, ນີ້ເປັນເລື່ອງໜຶ່ງທີ່ພວກ
ເຮົາຈະໄດ້ມີຄວາມປິຕິຍິນດີຫລາຍທີ່ສຸດ.
ເພາະຈົ່ງເບິ່ງ, ໃນປີທີຊາວຫົກ, ຂ້າພະເຈົ້າ
ຮີລາມັນໄດ້ເດີນທັບນຳໜ້າຊາຍໜຸ່ມສອງ
ພັນຄົນໄປຫາເມືອງຢູດາຍ, ເພື່ອຊ່ວຍ
ເຫລືອອານທິພັດ, ຜູ້ຊຶ່ງໄດ້ຖືກແຕ່ງຕັ້ງໃຫ້
ເປັນຜູ້ດູແລຜູ້ຄົນໃນແຜ່ນດິນພາກນັ້ນ.
10 ແລະ ຂ້າພະເຈົ້າໄດ້ນຳເອົາລູກຊາຍ
ສອງພັນຄົນຂອງຂ້າພະເຈົ້າ, (ເພາະວ່າ
ພວກເຂົາມີຄ່າຄວນທີ່ຈະຖືກເອີ້ນວ່າລູກ
ຊາຍ) ໄປຮ່ວມກັບກອງທັບຂອງອານທິ
ພັດ, ຊຶ່ງດ້ວຍກຳລັງນີ້ ອານທິພັດມີຄວາມ
ປິຕິຍິນດີຢ່າງຍິ່ງ; ເພາະຈົ່ງເບິ່ງ, ຊາວ
ເລມັນໄດ້ລົດກຳລັງທັບຂອງລາວລົງ ແລະ
ທະຫານຂອງລາວຖືກຂ້າຕາຍຢ່າງຫລວງ
ຫລາຍ, ດ້ວຍເຫດນີ້ ພວກເຮົາຈຶ່ງເປັນທຸກ.
11 ເຖິງຢ່າງໃດກໍຕາມ, ພວກເຮົາຍັງ
ປອບໃຈຕົວເອງໃນເລື່ອງນີ້ວ່າ ພວກເຂົາ
ໄດ້ຕາຍໄປເພື່ອອຸດົມການຂອງປະເທດ
ຊາດຂອງຕົນ ແລະ ເພື່ອພຣະເຈົ້າຂອງ
ພວກເຂົາ, ແທ້ຈິງແລ້ວ, ພວກເຂົາ [ກ]ເປັນ
ສຸກແລ້ວ.
12 ແລະ ຊາວເລມັນໄດ້ກັກຂັງຊະເລີຍ
ເສິກຫລາຍຄົນໄວ້ອີກ, ຊຶ່ງລ້ວນແຕ່ເປັນ
ຫົວໜ້ານາຍທະຫານ, ເພາະບໍ່ມີຜູ້ໃດອື່ນ
ເລີຍທີ່ພວກນັ້ນຈະໄວ້ຊີວິດ. ແລະ ພວກ
ເຮົາຄິດວ່າ ຂະນະນີ້ນາຍທະຫານເຫລົ່ານີ້
ອາດຈະຖືກກັກຂັງໄວ້ຢູ່ໃນແຜ່ນດິນນີໄຟ;
ຖ້າຫາກພວກເຂົາຍັງບໍ່ທັນຖືກຂ້າເທື່ອ.
13 ແລະ ບັດນີ້ ນີ້ແມ່ນເມືອງທີ່ຊາວ
ເລມັນຍຶດເອົາໄປໂດຍການເສຍເລືອດ
ເນື້ອຂອງຜູ້ກ້າຫານຂອງພວກເຮົາຫລາຍ
ຄົນ:
14 ແຜ່ນດິນແມນທາຍ, ຫລື ເມືອງ
ແມນທາຍ, ແລະ ເມືອງຊີເອສຣອມ, ແລະ
ເມືອງຄູມະໄນ, ແລະ ເມືອງອານທິພາຣາ.
15 ແລະ ເມືອງເຫລົ່ານີ້ຖືກພວກເລມັນ
ຍຶດເອົາໄປ ເວລາຂ້າພະເຈົ້າໄປຮອດເມືອງ
ຢູດາຍ; ແລະ ຂ້າພະເຈົ້າໄດ້ພົບກັບອານທິ
ພັດ ພ້ອມດ້ວຍທະຫານຂອງລາວທີ່ກຳລັງ
ເຮັດວຽກຢູ່ຢ່າງໜັກສຸດກຳລັງຢູ່ເພື່ອເສີມ
ສ້າງເມືອງໃຫ້ແໜ້ນໜາຂຶ້ນ.
16 ແທ້ຈິງແລ້ວ, ພວກເຂົາມີຄວາມອ່ອນ
ເພຍຫລາຍທັງຮ່າງກາຍ ແລະ ທາງວິນ
ຍານ, ເພາະວ່າພວກເຂົາໄດ້ຕໍ່ສູ້ຢ່າງອາດ
ຫານໃນເວລາກາງເວັນ ແລະ ເຮັດວຽກ
ໜັກໃນເວລາກາງຄືນເພື່ອຮັກສາເມືອງ
ຂອງພວກເຂົາໄວ້; ແລະ ພວກເຂົາຕ້ອງທົນ
ທຸກຢ່າງສາຫັດຕໍ່ທຸກຢ່າງ.
17 ແລະ ບັດນີ້ພວກເຂົາຕັ້ງໃຈຈະເອົາ

6 *ກ* ແອວ 24:17–18.
7 *ກ* ແອວ 53:13–15.
11 *ກ* ແອວ 28:12.

ຊະນະ ຫລື ຖືກ ຂ້າ ຢູ່ ໃນ ບ່ອນ ນີ້; ສະນັ້ນ
ທ່ານຈະຄິດວ່າກຳລັງຂອງຄົນກຸ່ມນ້ອຍໆ
ຊຶ່ງຂ້າພະເຈົ້ານຳມານີ້, ແທ້ຈິງແລ້ວ, ພວກ
ຊາຍໜຸ່ມ ຂອງ ຂ້າ ພະ ເຈົ້າ ຈະ ໃຫ້ຄວາມ
ຫວັງ ແລະ ຄວາມສຸກແກ່ພວກເຂົາຫລາຍ
ຂະໜາດໃດ.
18 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເວລາຊາວເລມັນເຫັນວ່າອາມທິພັດໄດ້ຮັບ
ກຳລັງເພີ່ມໃຫ້ກອງທັບຂອງລາວຫລາຍ
ຂຶ້ນ, ອາມໂມຣອນຈຶ່ງສັ່ງກອງທັບຂອງລາວ
ວ່າ ບໍ່ໃຫ້ພວກເຂົາມາໂຈມຕີເມືອງຢູດາຍ,
ຫລື ຍົກມາສູ້ຮົບກັບພວກເຮົາ.
19 ແລະ ພວກເຮົາຈຶ່ງເປັນທີ່ໂປດປານ
ຂອງພຣະຜູ້ເປັນເຈົ້າດັ່ງນີ້; ເພາະຖ້າຫາກ
ພວກເຂົາຍົກມາໂຈມຕີພວກເຮົາໃນຂະນະ
ທີ່ພວກເຮົາຍັງອ່ອນແອຢູ່ນັ້ນ ພວກເຂົາ
ອາດຈະທຳລາຍກອງທັບນ້ອຍໆຂອງພວກ
ເຮົາໄດ້; ແຕ່ວ່າພວກເຮົາໄດ້ຖືກປົກປັກຮັກ
ສາໄວ້ດັ່ງນີ້.
20 ອາມໂມຣອນໄດ້ສັ່ງໃຫ້ຜູ້ຄົນຂອງ
ລາວຮັກສາເມືອງເຫລົ່ານັ້ນ ຊຶ່ງພວກເຂົາ
ໄດ້ຍຶດເອົາມາໄດ້. ແລະ ປີທີຊາວຫົກໄດ້
ສິ້ນສຸດລົງດັ່ງນີ້. ແລະ ໃນຕົ້ນປີທີຊາວເຈັດ
ພວກເຮົາໄດ້ຕຽມເມືອງ ແລະ ຕຽມຕົວທີ່ຈະ
ສູ້ຮົບ.
21 ບັດນີ້ພວກເຮົາປາດຖະໜາຈະໃຫ້
ຊາວເລມັນຍົກມາໂຈມຕີພວກເຮົາ; ເພາະ
ພວກເຮົາບໍ່ປາດຖະໜາທີ່ຈະຍົກໄປໂຈມຕີ
ພວກເຂົາໃນທີ່ໝັ້ນຂອງພວກເຂົາ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ຈັດວາງນັກສືບໄວ້ທົ່ວໄປເພື່ອ
ຕິດຕາມການເຄື່ອນໄຫວຂອງຊາວເລມັນ,
ວ່າພວກເຂົາຈະບໍ່ຍົກທັບຜ່ານພວກເຮົາໄປ
ໃນເວລາກາງຄືນ ຫລື ໃນເວລາກາງເວັນ
ເພື່ອໄປໂຈມຕີເມືອງອື່ນໆຂອງພວກເຮົາຢູ່
ທາງເໜືອ.
23 ເພາະພວກເຮົາຮູ້ຈັກວ່າເມືອງເຫລົ່າ
ນັ້ນຍັງບໍ່ທັນມີກຳລັງພຽງພໍທີ່ຈະປະເຊີນ
ໜ້າກັບສັດຕູເທື່ອ; ສະນັ້ນ ພວກເຮົາຈຶ່ງ
ປາດຖະໜາທີ່ຈະເຂົ້າໂຈມຕີພວກເຂົາທາງ
ຂ້າງຫລັງ ຖ້າຫາກພວກເຂົາຜ່ານພວກ
ເຮົາໄປ, ແລະ ໂດຍວິທີນີ້ ພວກເຮົາກໍຈະ
ໄດ້ໂຈມຕີພວກເຂົາທາງຂ້າງຫລັງ ແລະ
ໃນຂະນະດຽວກັນ ພວກເຂົາຈະຖືກໂຈມຕີ
ທາງດ້ານໜ້າ. ພວກເຮົາຄິດວ່າ ພວກເຮົາ
ຈະເອົາຊະນະສັດຕູໄດ້; ແຕ່ຈົ່ງເບິ່ງ, ພວກ
ເຮົາຕ້ອງຜິດຫວັງໃນຄວາມຕັ້ງໃຈເທື່ອນີ້.
24 ພວກເຂົາບໍ່ກ້າຍົກກອງທັບທັງໝົດ
ຂອງພວກເຂົາຜ່ານໄປ, ທັງບໍ່ກ້າຍົກກອງ
ທັບບາງສ່ວນຜ່ານໄປ ເພາະຢ້ານວ່າຕົນ
ເອງບໍ່ມີກຳລັງພຽງພໍ, ແລະ ຢ້ານວ່າຈະ
ເສຍໄຊ.
25 ແລະ ພວກເຂົາກໍບໍ່ກ້າເດີນທັບລົງໄປ
ຕີເມືອງເຊຣາເຮັມລາ; ທັງບໍ່ກ້າຂ້າມຫົວແມ່
ນ້ຳຊີໂດນໄປຫາເມືອງນີໄຟຮາຄືກັນ.
26 ແລະ ດ້ວຍກຳລັງທັບຂອງພວກ
ເຂົາ, ພວກເຂົາຈຶ່ງຕັ້ງໃຈທີ່ຈະຮັກສາເມືອງ
ຕ່າງໆທີ່ພວກເຂົາຍຶດໄດ້ດັ່ງນີ້.
27 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ໃນເດືອນທີສອງຂອງປີນີ້, ພວກເຮົາໄດ້ຮັບ
ສະບຽງອາຫານຫລາຍຢ່າງຈາກພວກພໍ່
ຂອງຊາຍໜຸ່ມສອງພັນຄົນຂອງຂ້າພະເຈົ້າ.
28 ແລະ ມີຄົນອີກສອງພັນຄົນທີ່ຖືກ
ສົ່ງມາໃຫ້ພວກເຮົາຈາກແຜ່ນດິນເຊຣາ
ເຮັມລາ. ແລະ ພວກເຮົາຈຶ່ງມີຄົນພ້ອມແລ້ວ
ຢູ່ສະເໝີໜຶ່ງໝື່ນຄົນ, ແລະ ມີທັງສະບຽງ
ອາຫານສຳລັບພວກເຂົາ, ແລະ ສຳລັບເມຍ
ຂອງພວກເຂົາ ແລະ ລູກຂອງພວກເຂົາ.
29 ແລະ ຊາວເລມັນຈຶ່ງເຫັນວ່າກຳ
ລັງຂອງພວກເຮົານັບມື້ນັບເຂັ້ມແຂງຂຶ້ນ
ເລື້ອຍໆດັ່ງນີ້ ແລະ ສະບຽງອາຫານກໍຖືກ
ສົ່ງມາຄ້ຳຊູພວກເຮົາ, ພວກເຂົາກໍເລີ່ມມີ

ຄວາມ ຢ້ານ ກົວ ຫລາຍ ຂຶ້ນ, ແລະ ໄດ້ ຍົກ
ທັບໄປທັນທີ ເພື່ອຈະໄດ້ຢັບຢັ້ງບໍ່ໃຫ້ພວກ
ເຮົາ ໄດ້ຮັບສະບຽງ ອາຫານ ແລະ ກຳລັງ
ເພີ່ມເຕີມ.
30 ບັດ ນີ້ ເວລາ ພວກ ເຮົາ ເຫັນ ວ່າ ຊາວ
ເລມັນເລີ່ມກະວົນກະວາຍກ່ຽວກັບເລື່ອງນີ້,
ພວກເຮົາຈຶ່ງຄິດຈະໃຊ້ກົນອຸບາຍກັບພວກ
ເຂົາ; ສະນັ້ນ ອານທິພັດຈຶ່ງສັ່ງໃຫ້ຂ້າພະ
ເຈົ້າເດີນທັບໄປພ້ອມດ້ວຍພວກລູກຊາຍ
ໜຸ່ມຂອງຂ້າພະເຈົ້າ ເພື່ອໄປຫາເມືອງທີ່ຢູ່
ໃກ້ຄຽງໃຫ້ເຮັດຄືກັບວ່າ ພວກເຮົາກຳລັງ
ຂົນສະບຽງອາຫານໄປຫາເມືອງທີ່ຢູ່ໃກ້
ຄຽງນັ້ນ.
31 ແລະ ພວກ ເຮົາ ໄດ້ ເດີນ ທັບ ໄປ ໃກ້
ເມືອງອານທິພາຣາ, ຄ້າຍຄືກັບວ່າຈະກາຍ
ເມືອງນັ້ນໄປຫາອີກເມືອງໜຶ່ງທີ່ຢູ່ໃນຊາຍ
ແດນໃກ້ແຄມທະເລ.
32 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກ ເຮົາ ໄດ້ ເດີນທັບໄປ ຄ້າຍຄື ກັບ ວ່າ
ພວກ ເຮົາ ຈະ ໄປ ຫາ ເມືອງນັ້ນພ້ອມດ້ວຍ
ສະບຽງອາຫານຂອງພວກເຮົາ.
33 ແລະ ເຫດການ ໄດ້ບັງ ເກີດ ຂຶ້ນ ຄື
ອານທິພັດໄດ້ເດີນທັບໄປພ້ອມດ້ວຍກອງ
ທັບສ່ວນໜຶ່ງຂອງລາວ, ໂດຍໄດ້ປະສ່ວນ
ທີ່ເຫລືອໄວ້ເພື່ອຮັກສາຕົວເມືອງ. ແຕ່ວ່າ
ລາວບໍ່ໄດ້ຍົກໄປຈົນກວ່າຂ້າພະເຈົ້າຈະຍົກ
ໄປກ່ອນພ້ອມດ້ວຍກອງທັບນ້ອຍຂອງຂ້າ
ພະເຈົ້າ ແລະ ມາຮອດໃກ້ເມືອງອານທິພາ
ຣາ.
34 ແລະ ບັດນີ້, ຢູ່ໃນເມືອງອານທິພາຣາ
ນັ້ນມີກອງທັບທີ່ເຂັ້ມແຂງທີ່ສຸດຂອງຊາວ
ເລມັນຕັ້ງຢູ່; ແທ້ຈິງແລ້ວ, ຢູ່ທີ່ນັ້ນມີກຳລັງ
ພົນຫລາຍທີ່ສຸດ.
35 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາພວກເລມັນໄດ້ຮັບແຈ້ງຄວາມຈາກ
ນັກສືບ, ພວກ ເຂົາກໍໄດ້ ຍົກ ທັບ ມາພ້ອມ
ດ້ວຍກຳລັງທັບຂອງພວກເຂົາ ແລະ ເຂົ້າ
ມາໂຈມຕີພວກເຮົາ.
36 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຮົາໄດ້ໜີໄປທາງໜ້າພວກເຂົາໄປ
ທາງເໜືອ. ແລະ ພວກເຮົາໄດ້ນຳເອົາກອງ
ທັບທີ່ມີກຳລັງຫລາຍທີ່ສຸດຂອງຊາວເລມັນ
ອອກໄປຈາກທີ່ໝັ້ນດັ່ງນີ້;
37 ແທ້ຈິງແລ້ວ, ແມ່ນໄລຍະໄກບໍ່ໜ້ອຍ,
ເຖິງຂະໜາດທີ່ເມື່ອພວກເຂົາເຫັນກອງ
ທັບຂອງອານທິພັດຕິດຕາມມາດ້ວຍສຸດ
ກຳລັງ, ພວກເຂົາບໍ່ໄດ້ຫັນຂວາ ຫລື ຊ້າຍ,
ແຕ່ໄດ້ຍົກທັບ ຕິດ ຕາມ ພວກເຮົາມາ ໃນ
ເສັ້ນທາງຊື່; ແລະ ດັ່ງທີ່ພວກເຂົາຄິດໄວ້,
ມັນເປັນເຈດຕະນາຂອງພວກເຂົາທີ່ຈະຂ້າ
ພວກເຮົາເສຍ ກ່ອນທີ່ອານທິພັດຈະຍົກ
ທັບມາທັນພວກເຂົາ, ແລະ ນີ້ກໍເພື່ອວ່າ
ພວກເຂົາຈະບໍ່ໄດ້ຖືກທະຫານຂອງພວກ
ເຮົາລ້ອມໄວ້.
38 ແລະ ບັດນີ້ເວລາອານທິພັດເຫັນວ່າ
ພວກເຮົາມີອັນຕະລາຍ, ຈຶ່ງຟ້າວເດີນທັບ
ຂອງລາວມາຢ່າງວ່ອງໄວ. ແຕ່ຈົ່ງເບິ່ງ, ມັນ
ເປັນເວລາກາງຄືນ; ສະນັ້ນ ພວກເຂົາຈຶ່ງ
ບໍ່ສາມາດຕິດຕາມພວກເຮົາມາທັນ, ທັງ
ອານທິພັດກໍຕິດຕາມພວກເຂົາບໍ່ທັນຄືກັນ;
ສະນັ້ນ ພວກເຮົາຈຶ່ງໄດ້ຕັ້ງຄ້າຍພັກຂຶ້ນໃນ
ຄືນນັ້ນ.
39 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຕອນ ເຊົ້າມືດຂອງມື້ນັ້ນ, ຈົ່ງ ເບິ່ງ, ຊາວ
ເລມັນໄດ້ອອກໄລ່ຕາມພວກເຮົາມາອີກ
ແລ້ວ. ບັດນີ້ພວກເຮົາບໍ່ມີກຳລັງພຽງພໍທີ່ຈະ
ຕໍ່ສູ້ກັບພວກເຂົາ; ແທ້ຈິງແລ້ວ, ຂ້າພະເຈົ້າ
ທົນບໍ່ໄດ້ທີ່ຈະໃຫ້ລູກຊາຍໜຸ່ມທັງຫລາຍ
ຂອງຂ້າພະເຈົ້າຕ້ອງຕົກຢູ່ໃນກຳມືຂອງ
ພວກເຂົາ; ສະນັ້ນ ພວກເຮົາຈຶ່ງໄດ້ເດີນທັບ
ຕໍ່ໄປ, ແລະ ພວກເຮົາໄດ້ເດີນທັບເຂົ້າໄປ
ໃນຖິ່ນແຫ້ງແລ້ງກັນດານ.

40 ບັດ ນີ້ ພວກ ເຂົາ ບໍ່ ກ້າ ຫັນ ຂວາ ຫລື
ຊ້າຍ ເພາະພວກເຂົາຢ້ານວ່າພວກເຂົາຈະ
ຖືກອ້ອມໄວ້; ທັງຂ້າພະເຈົ້າເອງກໍບໍ່ກ້າຫັນ
ຂວາ ຫລື ຊ້າຍ ເພາະຢ້ານ ວ່າພວກ ເຂົາ
ຈະຕາມມາທັນ, ແລະ ພວກເຮົາຈະຕ້ານ
ທານພວກເຂົາບໍ່ໄດ້, ແຕ່ຈະຖືກຂ້າ, ແລ້ວ
ພວກເຂົາກໍຈະໜີໄປໄດ້; ແລະ ດ້ວຍເຫດ
ນີ້ ພວກເຮົາຈຶ່ງໄດ້ປົບໜີໄປເລື້ອຍໆໃນຖິ່ນ
ແຫ້ງແລ້ງກັນດານໝົດມື້ນັ້ນຈົນຮອດຕອນ
ຄ່ຳມືດ.
41 ແລະ ເຫດການໄດ້ບັງເກີດຂຶ້ນອີກຄື,
ຕອນເຊົ້າມື້ໃໝ່ມາ ພວກເຮົາກໍເຫັນຊາວ
ເລມັນຕິດຕາມມາອີກ, ແລະ ພວກເຮົາກໍ
ໄດ້ໜີໄປທາງໜ້າພວກເຂົາຕໍ່ໄປ.
42 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ຢຸດໄລ່ ຫລັງຈາກຕາມມາບໍ່ໄກເທົ່າ
ໃດ; ແລະ ມັນເປັນຕອນເຊົ້າຂອງວັນທີ
ສາມຂອງເດືອນເຈັດ.
43 ແລະ ບັດນີ້, ພວກເຮົາບໍ່ຮູ້ວ່າອານທິ
ພັດໄດ້ໄລ່ຕາມພວກນັ້ນມາທັນຫລືບໍ່, ແຕ່
ຂ້າພະເຈົ້າໄດ້ເວົ້າກັບຄົນຂອງຂ້າພະເຈົ້າ
ວ່າ: ຈົ່ງເບິ່ງ, ພວກເຮົາບໍ່ຮູ້ວ່າເປັນຫຍັງ
ສັດຕູຈຶ່ງຢຸດໄລ່ຕາມພວກເຮົາ ມັນອາດ
ຈະເປັນຈຸດປະສົງຂອງພວກເຂົາທີ່ຈະໃຫ້
ພວກເຮົາເຂົ້າໂຈມຕີ, ເພື່ອວ່າພວກເຮົາຈະ
ຖືກບ້ວງຂອງພວກເຂົາ;
44 ສະນັ້ນ ພວກເຈົ້າຈະວ່າແນວໃດ,
ລູກຂອງພໍ່, ພວກເຈົ້າຈະອອກໄປສູ້ຮົບກັບ
ພວກເຂົາບໍ?
45 ແລະ ບັດນີ້ຂ້າພະເຈົ້າເວົ້າກັບທ່ານ,
ອ້າຍນ້ອງໂມໂຣໄນທີ່ຮັກແພງຂອງຂ້າພະ
ເຈົ້າ, ວ່າຂ້າພະເຈົ້າບໍ່ເຄີຍເຫັນ [ກ]ຄວາມ
ກ້າຫານແບບນີ້ມາກ່ອນເລີຍ, ບໍ່ເຄີຍເລີຍ,
ບໍ່ເຄີຍເຫັນຜູ້ໃດເລີຍແມ່ນແຕ່ໃນບັນດາ
ຊາວນີໄຟທັງໝົດ.
46 ເພາະ ຂ້າ ພະ ເຈົ້າ ຈົນ ເຖິງ ຂັ້ນ ເອີ້ນ
ພວກເຂົາວ່າລູກຊາຍ (ເພາະວ່າພວກເຂົາ
ຍັງໜຸ່ມນ້ອຍຫລາຍ) ຈົນວ່າພວກເຂົາເອີ້ນ
ຂ້າພະເຈົ້າວ່າ: ພໍ່ເອີຍ, ຈົ່ງເບິ່ງ ພຣະເຈົ້າ
ສະຖິດຢູ່ກັບພວກເຮົາ, ແລະ ພຣະອົງຈະບໍ່
ຍອມໃຫ້ພວກເຮົາຖືກຂ້າດອກ; ຂໍໃຫ້ພວກ
ເຮົາອອກໄປເທາະ; ພວກເຮົາຈະບໍ່ຂ້າພີ່
ນ້ອງຊາວເລມັນຂອງພວກເຮົາ ຖ້າຫາກ
ພວກເຂົາຈະປ່ອຍພວກເຮົາໃຫ້ຢູ່ຕາມລຳ
ພັງ; ສະນັ້ນ ຂໍໃຫ້ພວກເຮົາອອກໄປເທາະ
ຢ້ານວ່າພວກສັດຕູຈະເອົາຊະນະກອງທັບ
ຂອງອານທິພັດ.
47 ບັດນີ້ພວກເຂົາບໍ່ເຄີຍຕໍ່ສູ້ມາກ່ອນ,
ແຕ່ພວກເຂົາບໍ່ຢ້ານຄວາມຕາຍເລີຍ; ແລະ
ພວກເຂົາໄດ້ຄິດເຖິງ [ກ]ເສລີພາບຂອງພໍ່
ຂອງພວກເຂົາຫລາຍກວ່າຊີວິດຂອງຕົນ
ເອງ; ແທ້ຈິງແລ້ວ, ພວກເຂົາໄດ້ຮັບການ
ສິດສອນຈາກ [ຂ]ແມ່ຂອງພວກເຂົາ, ວ່າຖ້າ
ຫາກພວກເຂົາບໍ່ສົງໃສ, ແລ້ວພຣະເຈົ້າຈະ
ປົດປ່ອຍພວກເຂົາ.
48 ແລະ ພວກເຂົາໄດ້ທົບທວນຄຳເວົ້າ
ຂອງແມ່ຂອງພວກເຂົາກັບຂ້າພະເຈົ້າ,
ໂດຍກ່າວວ່າ: ພວກເຮົາບໍ່ສົງໃສເລີຍວ່າ
ແມ່ຂອງພວກເຮົາຮູ້ຈັກເລື່ອງນີ້.
49 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າພ້ອມດ້ວຍທະຫານສອງພັນຄົນໄດ້
ຫັນກັບໄປຕໍ່ສູ້ກັບຊາວເລມັນທີ່ໄດ້ໄລ່ຕາມ
ພວກເຮົາມາ. ແລະ ບັດນີ້ຈົ່ງເບິ່ງ, ກອງທັບ
ຂອງອານທິພັດໄດ້ຍົກມາທັນ ແລະ ການສູ້
ຮົບອັນດຸເດືອດກໍເລີ່ມຕົ້ນ.
50 ໂດຍທີ່ກອງທັບຂອງອານທິພັດຍັງມີ
ຄວາມອ່ອນເພຍຫລາຍຢູ່ຍ້ອນການເດີນ
ທັບມາໄກພາຍໃນໄລຍະເວລາອັນສັ້ນໆ

45 ກ ແອວ 53:20–21.
47 ກ ແອວ 53:16–18.
ຂ ແອວ 57:21.
ຄມພ ມານດາ, ແມ່.

ແບບນີ້, ພວກເຂົາຈຶ່ງເກືອບຕົກຢູ່ໃນກຳມື
ຂອງຊາວເລມັນ; ແລະ ຖ້າຫາກຂ້າພະເຈົ້າ
ບໍ່ກັບຄືນມາພ້ອມດ້ວຍສອງພັນຄົນນີ້ແລ້ວ
ພວກເຂົາຄົງຈະໄດ້ບັນລຸຕາມຈຸດປະສົງ
ຂອງພວກເຂົາໄປແລ້ວ.
51 ເພາະ ອານທິພັດ ແລະ ຜູ້ນຳທະ
ຫານຫລາຍຄົນໄດ້ຖືກຂ້າຕາຍດ້ວຍດາບ
ຍ້ອນວ່າຄວາມອິດເມື່ອຍຂອງພວກເຂົາ
ຊຶ່ງເກີດມາຈາກການເດີນທັບຢ່າງວ່ອງ
ໄວ—ສະນັ້ນ ທະຫານຂອງອານທິພັດຈຶ່ງ
ມີຄວາມສັບສົນຍ້ອນການຕາຍຂອງພວກ
ຜູ້ນຳຂອງພວກເຂົາ, ແລ້ວພວກເຂົາກໍເລີ່ມ
ແຕກໜີໄປຈາກຊາວເລມັນ.
52 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນຈຶ່ງມີກຳລັງໃຈຂຶ້ນ, ແລະ ເລີ່ມໄລ່
ຕາມພວກເຂົາໄປ; ແລະ ຊາວເລມັນໄດ້ໄລ່
ພວກເຂົາໄປຢ່າງເອົາຈິງເອົາຈັງ ເມື່ອຮີລາ
ມັນພ້ອມດ້ວຍສອງພັນຄົນຂອງເພິ່ນເຂົ້າ
ຕີທາງດ້ານຫລັງ, ແລະ ເລີ່ມຂ້າພວກເຂົາ
ລົງຢ່າງຫລວງຫລາຍ, ເຖິງຂະໜາດທີ່ກອງ
ທັບຂອງຊາວເລມັນທັງໝົດຕ້ອງຢຸດ ແລະ
ຫັນກັບມາສູ້ກັບຮີລາມັນ.
53 ບັດນີ້ເວລາຄົນຂອງອານທິພັດເຫັນ
ວ່າຊາວເລມັນຫວນກັບຄືນໄປ, ພວກເຂົາ
ຈຶ່ງໄດ້ເຕົ້າໂຮມກັນເຂົ້າ ແລະ ເຂົ້າໄປໂຈມ
ຕີທາງດ້ານຫລັງຂອງຊາວເລມັນອີກ.
54 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາ, ຜູ້ຄົນຂອງນີໄຟ, ທະຫານຂອງ
ອານທິພັດ, ແລະ ຂ້າພະເຈົ້າພ້ອມດ້ວຍ
ສອງພັນຄົນຂອງຂ້າພະເຈົ້າໄດ້ລ້ອມຊາວ
ເລມັນໄວ້ ແລະ ໄດ້ຂ້າພວກເຂົາ; ແທ້ຈິງ
ແລ້ວ, ເຖິງຂະໜາດທີ່ພວກເຂົາຖືກບັງຄັບ
ໃຫ້ມອບອາວຸດແຫ່ງສົງຄາມ ແລະ ມອບ
ຕົວໃຫ້ເປັນຊະເລີຍເສິກ.
55 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເວລາພວກເຂົາຍອມມອບຕົວໃຫ້ກັບພວກ
ເຮົາແລ້ວ, ຈົ່ງເບິ່ງ, ຂ້າພະເຈົ້າຈຶ່ງໄດ້ນັບ
ຈຳນວນຊາຍໜຸ່ມທັງໝົດທີ່ໄດ້ຕໍ່ສູ້ຮ່ວມກັບ
ຂ້າພະເຈົ້າ, ຢ້ານວ່າຈະມີຫລາຍຄົນຖືກຂ້າ
ຕາຍ.
56 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າມີຄວາມປິຕິ
ຍິນດີຫລາຍທີ່ສຸດ ເພາະວ່າ [ກ]ບໍ່ມີຈັກຄົນ
ເລີຍທີ່ລົ້ມຕາຍກັບພື້ນດິນ; ແທ້ຈິງແລ້ວ,
ພວກເຂົາໄດ້ຕໍ່ສູ້ຄືກັນກັບວ່າພວກເຂົາຕໍ່ສູ້
ດ້ວຍພະລັງຂອງພຣະເຈົ້າ; ແທ້ຈິງແລ້ວ, ບໍ່
ເຄີຍມີຜູ້ໃດເຄີຍເຫັນການຕໍ່ສູ້ດ້ວຍພະລັງ
ອັນໜ້າອັດສະຈັນໃຈແບບນີ້ມາກ່ອນເລີຍ;
ແລະ ດ້ວຍພະລັງອັນຍິ່ງໃຫຍ່ນີ້ ພວກເຂົາ
ຈຶ່ງໄດ້ໂຈມຕີຊາວເລມັນ, ຈົນເຮັດໃຫ້ພວກ
ເຂົາມີຄວາມຢ້ານກົວຫລາຍ; ແລະ ດ້ວຍ
ເຫດນີ້ຊາວເລມັນຈຶ່ງໄດ້ຍອມມອບຕົວເປັນ
ຊະເລີຍເສິກ.
57 ແລະ ເນື່ອງຈາກວ່າພວກເຮົາບໍ່ມີ
ບ່ອນສຳລັບໄວ້ຊະເລີຍເສິກ, ທີ່ຈະໃຫ້
ພວກເຮົາຮັກສາພວກເຂົາໃຫ້ພົ້ນຈາກ
ກອງທັບຂອງຊາວເລມັນ, ສະນັ້ນ ພວກ
ເຮົາຈຶ່ງໄດ້ຈັດສົ່ງພວກເຂົາໄປຫາແຜ່ນດິນ
ເຊຣາເຮັມລາ, ຊຶ່ງມີທະຫານສ່ວນໜຶ່ງຂອງ
ອານທິພັດຜູ້ທີ່ບໍ່ໄດ້ຖືກຂ້ານຳພາໄປ, ແລະ
ສ່ວນທີ່ເຫລືອຢູ່ນັ້ນ ຂ້າພະເຈົ້າໄດ້ພາພວກ
ເຂົາໄປຮ່ວມກັບຊາຍໜຸ່ມ [ກ]ຊາວອຳໂມນ
ຂອງຂ້າພະເຈົ້າ, ແລະ ເດີນທັບກັບຄືນໄປ
ຫາເມືອງຢູດາຍ.

## ບົດທີ 57

*ຮີລາມັນທົບທວນເຖິງການຍຶດເອົາເມືອງ
ອານທິພາຣາ ແລະ ເຖິງການຍອມຈຳນົນ*

56 *ກ* ແອວ 57:25; 58:39.
57 *ກ* ແອວ 27:26; 53:10–11, 16.

*ແລະ ພາຍຫລັງມາໄດ້ເປັນກຳລັງປ້ອງກັນເມືອງຄູມະໄນ—ຊາຍໜຸ່ມຊາວອຳໂມນຕໍ່ສູ້ຢ່າງອົງອາດກ້າຫານ ແລະ ບໍ່ມີຜູ້ໃດຖືກຂ້າຕາຍເລີຍ; ມີແຕ່ໄດ້ຮັບບາດເຈັບເທົ່ານັ້ນ—ກິດລາຍງານເຖິງການຂ້າຟັນ ແລະ ການໂຕນໜີຂອງຊະເລີຍເສິກຊາວເລມັນ. ປະມານ 63 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ ຄື ຂ້າພະເຈົ້າໄດ້ຮັບສານສະບັບໜຶ່ງຈາກກະສັດອາມໂມຣອນ, ທີ່ມີຄວາມວ່າ ຖ້າຫາກຂ້າພະເຈົ້າສົ່ງຊະເລີຍເສິກທີ່ພວກເຮົາຈັບໄດ້ຄືນໃຫ້ລາວ ແລ້ວລາວຈະມອບເມືອງອານທິພາຣາໃຫ້ພວກເຮົາ.

2 ແຕ່ຂ້າພະເຈົ້າໄດ້ສົ່ງສານຕອບກະສັດ, ວ່າພວກເຮົາແນ່ໃຈວ່າ ກຳລັງຄົນຂອງພວກເຮົາມີພຽງພໍທີ່ຈະຕີເອົາເມືອງອານທິພາຣາໄດ້ດ້ວຍກຳລັງຂອງພວກເຮົາ; ແລະ ການສົ່ງຊະເລີຍເພື່ອແລກປ່ຽນກັບເມືອງນັ້ນ ພວກເຮົາຄິດວ່າມັນບໍ່ເປັນການສະຫລາດເລີຍ, ແລະ ວ່າພວກເຮົາຈະສົ່ງຊະເລີຍເສິກຄືນເພື່ອເປັນການແລກປ່ຽນກັບຊະເລີຍເສິກເທົ່ານັ້ນ.

3 ແລະ ອາມໂມຣອນປະຕິເສດສານຂອງຂ້າພະເຈົ້າ, ເພາະວ່າລາວບໍ່ຍອມແລກປ່ຽນຊະເລີຍເສິກ; ສະນັ້ນ ພວກເຮົາຈຶ່ງຕຽມພ້ອມເພື່ອຈະໄປຕີເອົາເມືອງອານທິພາຣາ.

4 ແຕ່ຜູ້ຄົນເມືອງອານທິພາຣາໄດ້ປະຖິ້ມເມືອງ ແລະ ອອກໜີໄປຫາເມືອງຕ່າງໆ ຊຶ່ງພວກເຂົາເປັນເຈົ້າຂອງຢູ່, ເພື່ອເສີມກຳລັງເມືອງເຫລົ່ານັ້ນ; ແລະ ດ້ວຍເຫດນີ້ ເມືອງອານທິພາຣາຈຶ່ງຕົກຢູ່ໃນມືຂອງພວກເຮົາດັ່ງນີ້.

5 ແລະ ປີທີຊາວແປດແຫ່ງການປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຕົ້ນປີທີຊາວເກົ້າ ພວກເຮົາໄດ້ສະບຽງອາຫານຊຸດໜຶ່ງ ແລະ ກຳລັງພົນມາເພີ່ມເຕີມກອງທັບອີກ, ຊຶ່ງໄດ້ມາຈາກແຜ່ນດິນເຊຣາເຮັມລາ, ແລະ ມາຈາກແຜ່ນດິນອ້ອມແອ້ມເປັນຈຳນວນຫົກພັນຄົນ, ນອກນັ້ນຍັງມີ [ກ]ຊາຍໜຸ່ມຊາວອຳໂມນອີກຫົກສິບຄົນ ຜູ້ທີ່ມາເຂົ້າຮ່ວມກັບກອງທັບນ້ອຍສອງພັນຄົນຂອງຂ້າພະເຈົ້າ ຊຶ່ງເປັນພີ່ນ້ອງຂອງພວກເຂົາເອງ. ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາມີກຳລັງເພີ່ມຂຶ້ນ, ແທ້ຈິງແລ້ວ, ພວກເຮົາໄດ້ຮັບສະບຽງອາຫານຢ່າງເຫລືອເຟືອຕື່ມອີກ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນເປັນຄວາມປາດຖະໜາຂອງພວກເຮົາທີ່ຈະ ສູ້ຮົບ ກັບ ກອງທັບທີ່ຖືກວາງໄວ້ເພື່ອປ້ອງກັນເມືອງຄູມະໄນ.

8 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຈະບອກໃຫ້ທ່ານຮູ້ວ່າ ຈາກນັ້ນໄປບໍ່ດົນພວກເຮົາກໍໄດ້ສຳເລັດຕາມຄວາມປາດຖະໜາຂອງພວກເຮົາ; ແທ້ຈິງແລ້ວ, ດ້ວຍກຳລັງອັນເຂັ້ມແຂງຂອງພວກເຮົາ, ຫລືດ້ວຍສ່ວນໜຶ່ງຂອງກຳລັງອັນເຂັ້ມແຂງຂອງພວກເຮົາ, ພວກເຮົາໄດ້ລ້ອມເມືອງຄູມະໄນໄວ້ໃນຕອນກາງຄືນ, ໃກ້ເວລາທີ່ພວກເຂົາຈະໄດ້ຮັບສະບຽງອາຫານ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ຕັ້ງຄ້າຍຢູ່ຮອບເມືອງເປັນເວລາຫລາຍຄືນ; ແຕ່ວ່າພວກເຮົາໄດ້ນອນກັບດາບ ແລະ ຈັດເວນຍາມໄວ້ເພື່ອຊາວເລມັນຈະບໍ່ໄດ້ມາໂຈມຕີພວກເຮົາໃນເວລາກາງຄືນ ແລະ ຂ້າພວກເຮົາຖິ້ມ ຊຶ່ງ

**57** 6*ກ* ແອວ 53:16–18.

ພວກ ເຂົາ ເຄີຍ ພະ ຍາ ຍາມ ມາ ກ່ອນ ແລ້ວ
ຫລາຍ ເທື່ອ; ແຕ່ ທຸກໆ ເທື່ອ ທີ່ ພວກ ເຂົາ
ພະຍາຍາມແບບນີ້ ພວກເຂົາຕ້ອງໄດ້ເສຍ
ເລືອດເນື້ອໄປ.
10 ຫລັງ ຈາກ ນັ້ນ ບໍ່ ດົນ ສະ ບຽງ ອາຫານ
ຂອງພວກເຂົາກໍມາຮອດ ແລະ ກຳລັງທີ່ຈະ
ເຂົ້າເມືອງໃນເວລາກາງຄືນ. ແລະ ສະນັ້ນ,
ພວກເຮົາ, ຊາວນີໄຟ ແທນທີ່ຈະເປັນຊາວ
ເລມັນ ຈຶ່ງໄດ້ຈັບພວກເຂົາ ແລະ ຍຶດເອົາ
ສະບຽງອາຫານຂອງພວກເຂົາໄວ້.
11 ແລະ ເຖິງແມ່ນວ່າຊາວເລມັນຖືກຕັດ
ອອກ ຈາກ ຄວາມ ຊ່ວຍ ເຫລືອ ຂອງ ພວກ
ເຂົາ ຕາມ ວິທີນີ້, ແຕ່ ພວກ ເຂົາຍັງຕັ້ງໃຈ
ທີ່ຈະຮັກສາ ເມືອງນັ້ນ ໄວ້ຢູ່; ສະນັ້ນ ມັນ
ຈຶ່ງເປັນການສົມຄວນທີ່ພວກເຮົາຈະຍຶດ
ເອົາ ສະ ບຽງ ອາ ຫານ ເຫລົ່າ ນີ້ ແລະ ສົ່ງ
ມັນໄປຫາເມືອງຢູດາຍ, ແລະ ສົ່ງຊະເລີຍ
ເສິກຂອງພວກເຮົາໄປຫາແຜ່ນດິນເຊຣາ
ເຮັມລາ.
12 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວ ລາ ຜ່ານ ໄປ ບໍ່ ເທົ່າ ໃດ ມື້ ກ່ອນທີ່ຊາວ
ເລມັນຈະໝົດຫວັງທີ່ຈະໄດ້ຮັບຄວາມຊ່ວຍ
ເຫລືອ; ສະນັ້ນ ພວກ ເຂົາ ຈຶ່ງ ຍອມ ມອບ
ເມືອງ ໃຫ້ຢູ່ໃນກຳມືຂອງພວກເຮົາ; ແລະ
ພວກ ເຮົາຈຶ່ງສຳເລັດຜົນດັ່ງນີ້ ຕາມແຜນ
ການຂອງພວກເຮົາທີ່ຈະຍຶດເອົາເມືອງຄູ
ມະໄນໄວ້.
13 ແຕ່ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ຊະ
ເລີຍ ເສິກ ຂອງ ພວກ ເຮົາ ມີ ເປັນ ຈຳນວນ
ຫລ ວງ ຫລ າຍ , ຊຶ່ງຫລາຍ ກວ່າ ຈຳນວນ
ທະຫານຂອງພວກເຮົາ, ພວກເຮົາຈຳເປັນ
ຕ້ອງໃຊ້ກຳລັງທັງໝົດຂອງພວກເຮົາເພື່ອ
ເຝົ້າຍາມ ແລະ ໄດ້ຂ້າຈຳນວນໜຶ່ງຖິ້ມ.
14 ເພາະຈົ່ງເບິ່ງ, ພວກເຂົາເປັນຈຳນວນ
ຫລວງຫລາຍທີ່ພະຍາຍາມໂຕນໜີ ແລະ ຕໍ່
ສູ້ດ້ວຍກ້ອນຫີນ, ຫລື ດ້ວຍໄມ້ຄ້ອນ, ຫລື
ດ້ວຍອັນໃດກໍແລ້ວແຕ່ທີ່ພວກເຂົາຈະຫາ
ມາໄດ້, ເຖິງຂະໜາດທີ່ພວກເຮົາໄດ້ຂ້າ
ພວກເຂົາຖິ້ມເຖິງສອງພັນຄົນ ຫລັງຈາກທີ່
ພວກເຂົາຍອມມອບຕົວເປັນຊະເລີຍເສິກ
ແລ້ວ.
15 ສະນັ້ນ ມັນຈຶ່ງສົມຄວນສຳລັບພວກ
ເຮົາ ທີ່ ຈະ ຂ້າ ພວກ ເຂົາ, ຫລື ຕ້ອງ ຍາມ
ພວ ກ ເ ຂົາ ດ້ວຍ ດ າບ ໃ ນ ມື, ແລະ ພວກ
ເຮົາຈຶ່ງໄດ້ພາພວກເຂົາລົງໄປຫາແຜ່ນດິນ
ເຊຣາເຮັມລາ; ແລະ ເພາະສະບຽງອາຫານ
ຂອງພວກເຮົາລວມທັງເຄື່ອງທີ່ຍຶດມາໄດ້
ຈາກຊາວເລມັນກໍຍັງບໍ່ພໍສຳລັບທະຫານ
ຂອງພວກເຮົາເອງຢູ່ແລ້ວ.
16 ແລະ ບັດນີ້, ໃນສະພາບອັນໜ້າວິຕົກ
ເຊັ່ນນີ້, ມັນຈຶ່ງເປັນເລື່ອງໜັກທີ່ສຸດທີ່ຈະ
ຕັດສິນໃຈກ່ຽວກັບຊະເລີຍເສິກເຫລົ່ານີ້;
ເຖິງຢ່າງໃດກໍຕາມ, ພວກເຮົາຍັງໄດ້ຕົກລົງ
ໃຈທີ່ຈະສົ່ງພວກເຂົາໄປຫາແຜ່ນດິນເຊຣາ
ເຮັມລາ; ສະນັ້ນ ພວກເຮົາຈຶ່ງໄດ້ເລືອກເອົາ
ຄົນຂອງພວກເຮົາສ່ວນໜຶ່ງ, ແລະ ມອບ
ໜ້າທີ່ໃຫ້ພວກເຂົາເຝົ້າຍາມຊະເລີຍເສິກ
ໃນຂະນະທີ່ກຳລັງພາພວກເຂົາລົງໄປຫາ
ແຜ່ນດິນເຊຣາເຮັມລາ.
17 ແຕ່ວ່າເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ ພວກເຂົາໄດ້ກັບຄືນມາ. ແລະ ບັດນີ້
ຈົ່ງເບິ່ງ, ພວກເຮົາບໍ່ໄດ້ສອບຖາມພວກເຂົາ
ກ່ຽວກັບຊະເລີຍເສິກເຫລົ່ານັ້ນເລີຍ; ເພາະ
ຈົ່ງເບິ່ງ, ຊາວເລມັນໄດ້ມາໂຈມຕີພວກເຮົາ,
ແລະ ພວກເຂົາມາທັນເວລາພໍດີເພື່ອຊ່ວຍ
ເຫລືອພວກເຮົາໃຫ້ພົ້ນຈາກການຕົກໄປຢູ່
ໃນກຳມືຂອງພວກຊາວເລມັນ. ເພາະຈົ່ງ
ເບິ່ງ, ອາມໂມຣອນໄດ້ສົ່ງສະບຽງອາຫານ
ມາຊ່ວຍພວກເຂົາພ້ອມດ້ວຍກຳລັງພົນ
ເປັນຈຳນວນຫລວງຫລາຍ.
18 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກຜູ້ຊາຍຊຶ່ງພວກເຮົາໄດ້ສົ່ງໄປກັບຊະ

ເລີຍເສີກນັ້ນໄດ້ມາຮອດທັນເວລາເພື່ອຢັບ
ຢັ້ງສັດຕູໄວ້, ຂະນະທີ່ພວກເຂົາກຳລັງຈະ
ຊະນະພວກເຮົາຢູ່ແລ້ວ.
19 ແຕ່ຈົ່ງເບິ່ງ, ກອງທັບນ້ອຍຈຳນວນ
ສອງພັນຫົກສິບຄົນນັ້ນ ໄດ້ຕໍ່ສູ້ຢ່າງດຸ
ເດືອດ; ແທ້ຈິງແລ້ວ, ພວກເຂົາເຂັ້ມແຂງ
ໃນການສູ້ຣົບ ແລະ ຕໍ່ຕ້ານກັບຊາວເລມັນ,
ແລະ ໄດ້ຂ້າທຸກຄົນທີ່ຂັດຂວາງພວກເຂົາ.
20 ແລະ ເວລາກອງທັບທີ່ເຫລືອຢູ່ຂອງ
ພວກເຮົາກຳລັງຈະຍອມແພ້ໃຫ້ແກ່ຊາວ
ເລມັນຢູ່ນັ້ນ, ຈົ່ງເບິ່ງ, ທະຫານສອງພັນຫົກ
ສິບຄົນນັ້ນຍັງເຂັ້ມແຂງ ແລະ ບໍ່ຫວັ່ນໄຫວ
ເລີຍ.
21 ແທ້ຈິງແລ້ວ, ພວກເຂົາໄດ້ເຊື່ອຟັງ
ແລະ ຕັ້ງໃຈປະຕິບັດຕາມຄຳສັ່ງທຸກຄຳ
ຢ່າງເຄັ່ງຄັດ; ແທ້ຈິງແລ້ວ, ມັນເປັນໄປເຊັ່ນ
ນີ້ຕາມສັດທາຂອງພວກເຂົາ; ແລະ ຂ້າພະ
ເຈົ້າໄດ້ຈື່ຈຳຄຳເວົ້າທີ່ພວກເຂົາເວົ້າກັບຂ້າ
ພະເຈົ້າວ່າ [ກ]ແມ່ຂອງພວກເຂົາໄດ້ສິດສອນ
ພວກເຂົາ.
22 ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາເປັນໜີ້
ຊີວິດຕໍ່ພວກລູກຊາຍເຫລົ່ານີ້ກັບພວກທີ່
ຖືກເລືອກໃຫ້ໄປສົ່ງຊະເລີຍເສີກເຫລົ່ານັ້ນ
ສຳລັບໄຊຊະນະເທື່ອນີ້; ເພາະພວກເຂົາ
ເປັນຜູ້ທີ່ຕີຊາວເລມັນໃຫ້ແຕກຜ່າຍໄປ;
ສະນັ້ນ ພວກນັ້ນຈຶ່ງຖືກຂັບໄລ່ກັບໄປຫາ
ເມືອງແມນທາຍ.
23 ແລະ ພວກເຮົາໄດ້ຍຶດເອົາເມືອງຄູມະ
ໄນໄວ້; ແລະ ບໍ່ໄດ້ຖືກທຳລາຍທັງໝົດດ້ວຍ
ດາບ; ເຖິງຢ່າງໃດກໍຕາມ, ພວກເຮົາກໍຍັງ
ໄດ້ຮັບການເສຍຫາຍຢ່າງຫລວງຫລາຍ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກຊາວເລມັນໄດ້ໜີໄປແລ້ວ, ຂ້າ
ພະເຈົ້າໄດ້ອອກຄຳສັ່ງທັນທີວ່າ ໃຫ້ຍ້າຍ
ທະຫານຂອງຂ້າພະເຈົ້າຜູ້ທີ່ໄດ້ຮັບບາດ
ເຈັບອອກຈາກຜູ້ທີ່ຕາຍ, ແລະ ສັ່ງໃຫ້ປິ່ນ
ປົວບາດແຜຂອງພວກເຂົາ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ມີຢູ່ສອງຮ້ອຍຄົນໃນສອງພັນຫົກສິບຄົນ
ຂອງຂ້າພະເຈົ້າທີ່ໄດ້ໝົດສະຕິໄປ ເພາະ
ການເສຍເລືອດຢ່າງໜັກ; ເຖິງຢ່າງໃດກໍ
ຕາມ, ດ້ວຍພຣະກະລຸນາທິຄຸນຂອງພຣະ
ເຈົ້າ, ແລະ ຕໍ່ຄວາມແປກປະຫລາດໃຈ
ຫລາຍທີ່ສຸດແກ່ພວກເຮົາ, ແລະ ດ້ວຍ
ຄວາມປິຕິຍິນດີຫລາຍແກ່ກອງທັບທັງໝົດ
ຂອງພວກເຮົາ, ເພາະວ່າ [ກ]ບໍ່ມີຜູ້ໃດເລີຍ
ໃນພວກເຮົາທີ່ຖືກຂ້າ; ແທ້ຈິງແລ້ວ, ແລະ
ບໍ່ມີເທົ່າໃດຄົນໃນບັນດາພວກເຮົາທີ່ໄດ້ຮັບ
ບາດເຈັບຫລາຍບ່ອນ.
26 ແລະ ບັດນີ້, ການຮັກສາທີ່ພວກເຂົາ
ໄດ້ຮັບນັ້ນເປັນການແປກປະຫລາດໃຈແກ່
ທົ່ວກອງທັບຂອງພວກເຮົາ, ແທ້ຈິງແລ້ວ,
ພວກເຂົາໄດ້ຮັບການໄວ້ຊີວິດໃນຂະນະທີ່
ພີ່ນ້ອງຂອງພວກເຮົາຫລາຍພັນຄົນຖືກຂ້າ
ຕາຍ. ແລະ ພວກເຮົາເຊື່ອຢ່າງແນ່ນອນ
ວ່າມັນເປັນ [ກ]ອຳນາດອັນໜ້າອັດສະຈັນ
ໃຈຂອງພຣະເຈົ້າ, ຍ້ອນວ່າ [ຂ]ສັດທາຂອງ
ພວກເຂົາມີຫລາຍທີ່ສຸດ ແລະ ພວກເຂົາ
ໄດ້ຮັບການສິດສອນໃຫ້ເຊື່ອ—ວ່າມັນມີ
ພຣະເຈົ້າຜູ້ທ່ຽງທຳ, ແລະ ຜູ້ໃດກໍຕາມທີ່ບໍ່
ສົງໃສ, ຜູ້ນັ້ນຈະໄດ້ຮັບການປົກປັກຮັກສາ
ໄວ້ໂດຍອຳນາດອັນໜ້າອັດສະຈັນຂອງ
ພຣະອົງ.
27 ບັດນີ້ ນີ້ຄືສັດທາຂອງພວກເຂົາ ຊຶ່ງ
ຂ້າພະເຈົ້າໄດ້ກ່າວມາແລ້ວ; ພວກເຂົາຍັງ
ໜຸ່ມນ້ອຍ, ແລະ ຈິດໃຈຂອງພວກເຂົາເຂັ້ມ
ແຂງ, ແລະ ພວກເຂົາມີຄວາມໄວ້ວາງໃຈ
ໃນພຣະເຈົ້າຕະຫລອດເວລາ.

21 *ກ* ແອວ 56:47–48.
25 *ກ* ແອວ 56:56.
26 *ກ* ຄນພ ອຳນາດ.
*ຂ* ຄນພ ສັດທາ.

28 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກທີ່ພວກເຮົາໄດ້ພະຍາບານຜູ້ຄົນຂອງພວກເຮົາຜູ້ທີ່ໄດ້ຮັບບາດເຈັບ, ແລະ ໄດ້ຝັງສົບຄົນຂອງພວກເຮົາ ແລະ ຊາວເລມັນ ຊຶ່ງມີຢູ່ຢ່າງຫລວງຫລາຍແລ້ວ, ຈົ່ງເບິ່ງ, ພວກເຮົາໄດ້ຖາມກິດກ່ຽວກັບຊະເລີຍເສິກ ຊຶ່ງພວກເຂົາໄດ້ພາລົງໄປຫາແຜ່ນດິນເຊຣາເຮັມລາ.

29 ບັດນີ້ກິດເປັນຫົວໜ້ານາຍທະຫານຄວບຄຸມກຸ່ມທະຫານຜູ້ຖືກແຕ່ງຕັ້ງໃຫ້ຄຸມພວກຊະເລີຍເສິກໄປຫາແຜ່ນດິນນັ້ນ.

30 ແລະ ບັດນີ້ ນີ້ຄືຄຳເວົ້າຂອງກິດທີ່ໄດ້ເວົ້າກັບຂ້າພະເຈົ້າວ່າ: ຈົ່ງເບິ່ງ, ພວກເຮົາໄດ້ເລີ່ມເດີນທາງລົງໄປຫາແຜ່ນດິນເຊຣາເຮັມລາພ້ອມດ້ວຍຊະເລີຍເສິກຂອງພວກເຮົາ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ພົບກັບພວກນັກສືບຂອງກອງທັບຂອງພວກເຮົາ ຜູ້ຊຶ່ງໄດ້ຖືກສົ່ງໃຫ້ໄປຕິດຕາມເບິ່ງຄ້າຍຂອງຊາວເລມັນ.

31 ແລະ ພວກນັ້ນໄດ້ຮ້ອງບອກພວກເຮົາ, ໂດຍກ່າວວ່າ—ຈົ່ງເບິ່ງ, ກອງທັບຂອງຊາວເລມັນກຳລັງຍົກທັບໄປທາງເມືອງຄູມະໄນ; ແລະ ຈົ່ງເບິ່ງ, ພວກເຂົາໄດ້ເຂົ້າໂຈມຕີພວກທີ່ຢູ່ໃນເມືອງນັ້ນ, ແທ້ຈິງແລ້ວ, ແລະ ຈະທຳລາຍຜູ້ຄົນຂອງພວກເຮົາ.

32 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາພວກຊະເລີຍເສິກຂອງພວກເຮົາໄດ້ຍິນສຽງຮ້ອງບອກຂອງພວກເຂົາ, ພວກເຂົາຈຶ່ງມີກຳລັງໃຈຂຶ້ນ; ແລະ ພວກເຂົາໄດ້ລຸກຂຶ້ນໃນການກະບົດຕໍ່ພວກເຮົາ.

33 ແລະ ເຫດການໄດ້ບັງເກີດຂຶ້ນຄື ເປັນຍ້ອນການກະບົດຂອງພວກເຂົາ ຈຶ່ງເປັນເຫດໃຫ້ພວກເຮົາຕ້ອງຟາດຟັນພວກເຂົາ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ແລ່ນເຂົ້າມາຫາດາບຂອງພວກເຮົາເປັນໝູ່, ມັນຈຶ່ງເຮັດໃຫ້ພວກເຂົາສ່ວນຫລາຍຖືກຂ້າຕາຍ ແລະ ພວກທີ່ເຫລືອຕາຍນັ້ນໄດ້ແລ່ນຜ່າຍໜີໄປ.

34 ແລະ ຈົ່ງເບິ່ງ, ເວລາພວກເຂົາໄດ້ໜີໄປແລ້ວ ແລະ ພວກເຮົາບໍ່ສາມາດໄລ່ຕາມພວກເຂົາທັນ, ພວກເຮົາຈຶ່ງໄດ້ເດີນທັບຢ່າງວ່ອງໄວກັບມາເມືອງຄູມະໄນ; ແລະ ຈົ່ງເບິ່ງ, ພວກເຮົາໄດ້ມາເຖິງທັນເວລາເພື່ອຈະໄດ້ຊ່ວຍເຫລືອພີ່ນ້ອງຂອງພວກເຮົາໃນການປ້ອງກັນເມືອງໄວ້.

35 ແລະ ຈົ່ງເບິ່ງ, ພວກເຮົາໄດ້ຮັບການປົດປ່ອຍໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຮົາອີກ. ແລະ ຂໍພຣະນາມຂອງພຣະເຈົ້າຂອງພວກເຮົາຈົ່ງພຣະກະເສີມສຳລານເຖີດ; ເພາະຈົ່ງເບິ່ງ, ມັນແມ່ນພຣະອົງທີ່ປົດປ່ອຍພວກເຮົາ; ແທ້ຈິງແລ້ວ, ທີ່ເຮັດການອັນຍິ່ງໃຫຍ່ນີ້ແກ່ພວກເຮົາ.

36 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອຂ້າພະເຈົ້າຮີລາມັນໄດ້ຍິນຂໍ້ຄວາມຂອງກິດແລ້ວ, ຂ້າພະເຈົ້າກໍເຕັມໄປດ້ວຍຄວາມສຸກຢ່າງລົ້ນເຫລືອ, ຍ້ອນວ່າພຣະກະລຸນາທິຄຸນຂອງພຣະເຈົ້າທີ່ໄດ້ປົກປັກຮັກສາພວກເຮົາໄວ້, ເພື່ອວ່າພວກເຮົາທັງໝົດຈະບໍ່ໄດ້ຖືກຂ້າ; ແທ້ຈິງແລ້ວ, ແລະ ຂ້າພະເຈົ້າແນ່ໃຈວ່າ ຈິດວິນຍານຂອງຜູ້ທີ່ຕາຍໄປນັ້ນໄດ້ [ກ]ເຂົ້າໄປໃນທີ່ພັກຂອງພຣະເຈົ້າຂອງພວກເຂົາແລ້ວ.

## ບົດທີ 58

*ຮີລາມັນ, ກິດ, ແລະ ທີອອມເນີ ຍຶດເອົາເມືອງແມນທາຍຄືນມາດ້ວຍກົນອຸບາຍ—*

36 ກ ແອວ 12:34.

*ຊາວເລມັນຖອນອອກໄປ—ພວກລູກຊາຍຂອງຜູ້ຄົນຂອງອຳໂມນໄດ້ຮັບການປົກປັກຮັກສາໄວ້ ຊຶ່ງພວກເຂົາໝັ້ນຄົງຢູ່ໃນການປ້ອງກັນ ເສລີພາບ ແລະ ໝັ້ນ ຄົງຢູ່ກັບສັດທາຂອງພວກເຂົາ. ປະມານ 63–62 ປີກ່ອນ ຄ.ສ.*

1 ແລະ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງ
ເກີດຂຶ້ນຄື ຈຸດປະສົງຕໍ່ໄປຂອງພວກເຮົາ
ແມ່ນຈະເອົາເມືອງແມນທາຍໃຫ້ໄດ້; ແຕ່
ຈົ່ງເບິ່ງ, ບໍ່ມີທາງທີ່ພວກເຮົາຈະສາມາດ
ເຮັດໃຫ້ພວກເຂົາອອກຈາກເມືອງດ້ວຍ
ກຳລັງທັບນ້ອຍຂອງພວກເຮົານີ້. ເພາະ
ຈົ່ງເບິ່ງ, ພວກເຂົາຈື່ກົນອຸບາຍທີ່ພວກເຮົາ
ເຄີຍໄດ້ເຮັດມາກ່ອນແລ້ວ; ສະນັ້ນ ພວກ
ເຮົາຈະ [ກ]ຫລອກໃຫ້ພວກເຂົາອອກມາຈາກ
ທີ່ໝັ້ນຂອງພວກເຂົາບໍ່ໄດ້ອີກແລ້ວ.
2 ແລະ ພວກເຂົາມີຈຳນວນພົນຢ່າງ
ຫລວງຫລາຍ, ຫລາຍກວ່າກອງທັບຂອງ
ພວກເຮົາ ຈົນວ່າພວກເຮົາບໍ່ກ້າອອກໄປ
ໂຈມຕີພວກເຂົາໃນທີ່ໝັ້ນຂອງພວກເຂົາ.
3 ແທ້ຈິງແລ້ວ, ມັນສົມຄວນທີ່ພວກເຮົາ
ຈະໃຫ້ຄົນຂອງພວກເຮົາຮັກສາແຜ່ນດິນ
ພາກຕ່າງໆທີ່ພວກເຮົາໄດ້ຍຶດກັບຄືນມາ
ເປັນເຈົ້າຂອງອີກ; ສະນັ້ນ ມັນຈຶ່ງສົມຄວນ
ທີ່ພວກເຮົາຕ້ອງລໍຖ້າຈົນກວ່າພວກເຮົາ
ຈະໄດ້ຮັບກຳລັງເພີ່ມຈາກແຜ່ນດິນເຊຣາ
ເຮັມລາ ແລະ ໄດ້ຮັບສະບຽງອາຫານຕື່ມ
ອີກ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ສົ່ງນາຍທູດໄປຫາຜູ້ປົກຄອງ
ແຜ່ນດິນຂອງພວກເຮົາ, ເພື່ອໃຫ້ເພິ່ນຮູ້ຈັກ
ການງານຂອງຜູ້ຄົນຂອງພວກເຮົາ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້
ຄອຍຖ້າຮັບສະບຽງອາຫານ ແລະ ກຳລັງ
ເພີ່ມເຕີມຈາກແຜ່ນດິນເຊຣາເຮັມລາ.
5 ແຕ່ຈົ່ງເບິ່ງ, ການລໍຄອຍນີ້ບໍ່ເປັນປະ
ໂຫຍດໃຫ້ແກ່ພວກເຮົາເລີຍ ເພາະວ່າ
ແຕ່ລະມື້ຊາວເລມັນໄດ້ຮັບກຳລັງເພີ່ມຂຶ້ນ
ພ້ອມທັງສະບຽງອາຫານເປັນຈຳນວນ
ຫລວງຫລາຍ; ແລະ ນີ້ຄືສະພາບຂອງ
ພວກເຮົາໃນໄລຍະນີ້.
6 ແລະ ຊາວເລມັນກໍໄດ້ອອກມາໂຈມ
ຕີພວກເຮົາເປັນບາງຄັ້ງ, ໂດຍຕັ້ງໃຈທີ່ຈະ
ທຳລາຍພວກເຮົາດ້ວຍກົນອຸບາຍ; ເຖິງ
ຢ່າງໃດກໍຕາມ, ພວກເຮົາບໍ່ສາມາດອອກຕໍ່
ສູ້ກັບພວກເຂົາ ເພາະກຳລັງ ແລະ ທີ່ໝັ້ນ
ຂອງພວກເຂົາ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ຄອຍຖ້າຢູ່ໃນສະພາບອັນທຸກຍາກ
ລຳບາກເປັນເວລາຫລາຍເດືອນ, ຈົນວ່າ
ພວກເຮົາເກືອບຈະຕາຍ ຍ້ອນການຂາດ
ອາຫານ.
8 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຮົາໄດ້ຮັບອາຫານພ້ອມກັບກອງທະຫານ
ສອງພັນຄົນ ຊຶ່ງພວກເຂົາເຫລົ່ານີ້ເປັນຜູ້ທີ່
ຄຸ້ມກັນອາຫານມາເພື່ອຊ່ວຍເຫລືອພວກ
ເຮົາ; ແລະ ນີ້ຄືຄວາມຊ່ວຍເຫລືອທັງໝົດ
ທີ່ພວກເຮົາໄດ້ຮັບ, ເພື່ອຈະໄດ້ປ້ອງກັນ
ປະເທດຊາດຂອງພວກເຮົາຈາກການຕົກ
ໄປສູ່ກຳມືຂອງສັດຕູຂອງພວກເຮົາ, ແທ້ຈິງ
ແລ້ວ, ເພື່ອຈະໄດ້ຕໍ່ສູ້ກັບສັດຕູຂອງພວກ
ເຮົາ ຊຶ່ງມີຈຳນວນຈົນນັບບໍ່ຖ້ວນ.
9 ແລະ ບັດນີ້ສາເຫດຂອງຄວາມກັງວົນ
ໃຈເຫລົ່ານີ້ຂອງພວກເຮົາ, ຫລື ສາເຫດວ່າ
ເປັນດ້ວຍເຫດໃດພວກເພິ່ນຈຶ່ງບໍ່ສົ່ງກຳລັງ
ມາໃຫ້ພວກເຮົາຫລາຍກວ່ານີ້, ພວກເຮົາ
ບໍ່ຮູ້ຈັກ; ສະນັ້ນ ພວກເຮົາຈຶ່ງມີຄວາມໂສກ

**58** 1*ກ* ແອວ 52:21; 56:30.

ເສົ້າ ແລະ ເຕັມ ໄປ ດ້ວຍ ຄວາມ ຢ້ານ ກົວ,
ຢ້ານວ່າບໍ່ທາງໃດກໍທາງໜຶ່ງການພິພາກ
ສາຂອງພຣະເຈົ້າຈະເກີດກັບແຜ່ນດິນຂອງ
ພວກເຮົາ, ຈົນເຖິງການລົບລ້າງ ແລະ ເຖິງ
ຄວາມພິນາດຈົນໝົດສິ້ນ.

10 ສະນັ້ນ ພວກເຮົາຈຶ່ງໄດ້ທຸ້ມເທຈິດ
ວິນຍານຂອງພວກເຮົາໃນການອະທິຖານ
ຫາພຣະເຈົ້າ, ເພື່ອວ່າພຣະອົງຈະເຮັດໃຫ້
ພວກເຮົາມີກຳລັງຂຶ້ນ ແລະ ປົດປ່ອຍພວກ
ເຮົາໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກ
ເຮົາ, ແທ້ຈິງແລ້ວ, ຂໍໃຫ້ພວກເຮົາມີກຳລັງ
ເພີ່ມຂຶ້ນເພື່ອພວກເຮົາຈະໄດ້ຮັກສາເມືອງ
ຂອງພວກເຮົາ, ແລະ ແຜ່ນດິນຂອງພວກ
ເຮົາ, ແລະ ຊັບສິນຂອງພວກເຮົາໄວ້ເພື່ອ
ຄ້ຳຊູຜູ້ຄົນຂອງພວກເຮົາ.

11 ແທ້ຈິງແລ້ວ, ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຮົາໄດ້ມາຢ້ຽມຢາມພວກ
ເຮົາໂດຍໃຫ້ຄວາມໝັ້ນໃຈວ່າ ພຣະອົງຈະ
ປົດປ່ອຍພວກເຮົາ; ແທ້ຈິງແລ້ວ, ເຖິງຂະ
ໜາດທີ່ພຣະອົງໄດ້ກ່າວຄວາມສະຫງົບ
ແກ່ຈິດວິນຍານຂອງພວກເຮົາ, ແລະ ໄດ້
ປະທານສັດທາອັນແຮງກ້າໃຫ້ແກ່ພວກ
ເຮົາ, ແລະ ເຮັດໃຫ້ພວກເຮົາມີຄວາມຫວັງ
ໃນຄວາມລອດພົ້ນຂອງພວກເຮົາຈາກ
ພຣະອົງ.

12 ແລະ ພວກເຮົາກໍໄດ້ມີກຳລັງໃຈຂຶ້ນ
ກັບກຳລັງອັນເລັກນ້ອຍຊຶ່ງພວກເຮົາໄດ້
ຮັບນັ້ນ, ແລະ ພວກເຮົາເຈາະຈົງຢູ່ກັບ
ຄວາມຕັ້ງໃຈທີ່ຈະເອົາຊະນະສັດຕູຂອງ
ພວກເຮົາ, ແລະ ເພື່ອ [ກ]ຮັກສາແຜ່ນດິນ
ຂອງພວກເຮົາ, ແລະ ຊັບສິນຂອງພວກ
ເຮົາ, ແລະ ເມຍຂອງພວກເຮົາ, ແລະ ລູກ
ຂອງພວກເຮົາ, ແລະ ອຸດົມການແຫ່ງ [ຂ]ເສ
ລີພາບຂອງພວກເຮົາໄວ້.

13 ແລະ ພວກເຮົາໄດ້ຍົກກຳລັງອອກໄປ
ດ້ວຍສຸດກຳລັງຂອງພວກເຮົາ ເພື່ອຕໍ່ສູ້ກັບ
ຊາວເລມັນ ຊຶ່ງຢູ່ໃນເມືອງແມນທາຍ; ແລະ
ພວກເຮົາໄດ້ຕັ້ງຄ້າຍຂຶ້ນທາງຂ້າງຖິ່ນແຫ້ງ
ແລ້ງກັນດານຊຶ່ງຢູ່ໃກ້ເມືອງ.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ, ເວລາຊາວເລມັນເຫັນວ່າພວກ
ເຮົາຢູ່ຂ້າງຖິ່ນແຫ້ງແລ້ງກັນດານຊຶ່ງຢູ່ໃກ້
ເມືອງ, ພວກເຂົາຈຶ່ງໄດ້ສົ່ງນັກສືບມາສອດ
ແນມເບິ່ງພວກເຮົາ ເພື່ອພວກເຂົາຈະໄດ້ຮູ້
ຈັກເຖິງຈຳນວນ ແລະ ກຳລັງທັບຂອງພວກ
ເຮົາ.

15 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາພວກເຂົາເຫັນວ່າພວກເຮົາບໍ່ມີກຳ
ລັງ ຫລາຍ ຕາມ ຈຳນວນ ຂອງ ພວກ ເຮົາ,
ແລະ ໂດຍຢ້ານວ່າພວກເຮົາຈະເຮັດໃຫ້
ພວກເຂົາຕັດຂາດຈາກການຊ່ວຍເຫລືອ
ຖ້າຫາກພວກເຂົາບໍ່ຍົກກຳລັງອອກມາສູ້
ຮົບ ແລະ ຂ້າພວກເຮົາເສຍ, ແລະ ໂດຍ
ຄິດອີກວ່າພວກເຂົາຈະທຳລາຍພວກເຮົາ
ໄດ້ຢ່າງງ່າຍດາຍດ້ວຍກຳລັງທະຫານອັນ
ຫລວງຫລາຍຂອງພວກເຂົາ, ສະນັ້ນ ພວກ
ເຂົາຈຶ່ງເລີ່ມ ຕຽມຕົວເພື່ອອອກມາສູ້ຮົບກັບ
ພວກເຮົາ.

16 ແລະ ເມື່ອ ພວກ ເຮົາ ເຫັນ ວ່າ ພວກ
ເຂົາກຳລັງຕຽມຕົວເພື່ອຈະອອກມາສູ້ຮົບ
ກັບພວກເຮົາ, ຈົ່ງເບິ່ງ, ຂ້າພະເຈົ້າຈຶ່ງໃຫ້
ກິດພ້ອມດ້ວຍທະຫານສ່ວນໜຶ່ງໄປລີ້ຢູ່ໃນ
ຖິ່ນແຫ້ງແລ້ງກັນດານ, ແລະ ທີອອມເນີກັບ
ຄົນຂອງລາວສ່ວນໜຶ່ງກໍໄປລີ້ຢູ່ໃນຖິ່ນແຫ້ງ
ແລ້ງກັນດານຄືກັນ.

17 ບັດນີ້ກິດກັບຄົນຂອງລາວໄດ້ຢູ່ທາງ
ເບື້ອງຂວາ ແລະ ອີກພວກໜຶ່ງຢູ່ທາງເບື້ອງ

12 *ກ* ແອວ 46:12–13; ມມ 2:23.

*ຂ* ຄມພ ເສລີພາບ.

ຊ້າຍ; ແລະ ເວລາທີ່ພວກເຂົາກຳລັງລີ້ຢູ່
ນັ້ນ, ຈົ່ງເບິ່ງ, ຂ້າພະເຈົ້າ ພ້ອມດ້ວຍກອງ
ທັບທີ່ເຫລືອຢູ່ຂອງຂ້າພະເຈົ້າຍັງຄົງຢູ່
ບ່ອນເກົ່າ, ຊຶ່ງເປັນບ່ອນທີ່ພວກເຮົາໄດ້ຕັ້ງ
ຄ້າຍຂຶ້ນ ແລະ ໄດ້ຄອຍຖ້າເວລາທີ່ຊາວ
ເລມັນຈະຍົກທັບອອກມາສູ້ຮົບກັບພວກ
ເຮົາ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນກໍໄດ້ອອກມາຕໍ່ສູ້ກັບພວກເຮົາດ້ວຍ
ກຳລັງທັບອັນມະຫາສານຂອງພວກເຂົາ.
ແລະ ເວລາທີ່ພວກເຂົາຍົກມາ ແລະ ກຳລັງ
ຈະເຂົ້າໂຈມຕີພວກເຮົາດ້ວຍດາບ, ຂ້າພະ
ເຈົ້າກໍໃຫ້ທະຫານຂອງຂ້າພະເຈົ້າທີ່ຢູ່ກັບ
ຂ້າພະເຈົ້າຖອຍອອກໄປໃນຖິ່ນແຫ້ງແລ້ງ
ກັນດານ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນໄດ້ຕິດຕາມພວກເຮົາມາດ້ວຍຄວາມ
ວ່ອງໄວ ເພາະວ່າພວກເຂົາປາດຖະໜາທີ່
ຈະຕິດຕາມໃຫ້ທັນ ເພື່ອພວກເຂົາຈະໄດ້
ຂ້າພວກເຮົາ; ສະນັ້ນ ພວກເຂົາຈຶ່ງຕິດຕາມ
ພວກເຮົາເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ;
ແລະ ພວກເຮົາໄດ້ຜ່ານໄປທາງກາງຂອງ
ກິດ ແລະ ທີອອມເນີ, ເຖິງຂະໜາດທີ່ຊາວ
ເລມັນບໍ່ເຫັນພວກເຂົາ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາຊາວເລມັນໄດ້ຜ່ານໄປ, ຫລື ວ່າກອງ
ທັບໄດ້ຜ່ານໄປແລ້ວ ກິດ ແລະ ທີອອມເນີ
ໄດ້ຍົກທັບອອກມາຈາກບ່ອນລີ້ຊ່ອນຂອງ
ພວກເຂົາ, ແລະ ໄດ້ກັ້ນພວກນັກສືບຂອງ
ຊາວເລມັນໄວ້ ເພື່ອບໍ່ໃຫ້ພວກເຂົາກັບຄືນ
ໄປຫາເມືອງ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາພວກເຂົາກັ້ນພວກເລມັນໄວ້ແລ້ວ,
ພວກເຂົາຈຶ່ງໄດ້ແລ່ນເຂົ້າໄປໃນເມືອງ
ແລະ ເຂົ້າໂຈມຕີ ແລະ ທຳລາຍທະຫານ
ຍາມທີ່ປະໄວ້ເຝົ້າເມືອງ, ເຖິງຂະໜາດທີ່
ພວກເຂົາໄດ້ທຳລາຍພວກເຂົາ ແລະ ໄດ້
ເຂົ້າຍຶດເອົາເມືອງນັ້ນ.
22 ບັດນີ້ມັນເປັນໄປເຊັ່ນນີ້ຍ້ອນວ່າຊາວ
ເລມັນໄດ້ຍອມໃຫ້ກອງທັບທັງໝົດຂອງ
ພວກເຂົາເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ,
ຍົກເວັ້ນແຕ່ທະຫານຍາມບໍ່ເທົ່າໃດຄົນເທົ່າ
ນັ້ນ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂດຍວິທີນີ້ ກິດ ແລະ ທີອອມເນີ ຈຶ່ງໄດ້ຍຶດ
ເອົາທີ່ໝັ້ນຂອງພວກເຂົາໄດ້. ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ຫລັງຈາກທີ່ໄດ້ເດີນ
ທາງໄປໃນຖິ່ນແຫ້ງແລ້ງກັນດານດົນພໍສົມ
ຄວນ, ພວກເຮົາຈຶ່ງໄດ້ອອກໄປຕາມເສັ້ນ
ທາງຂອງພວກເຮົາມຸ້ງໜ້າໄປຫາແຜ່ນດິນ
ເຊຣາເຮັມລາ.
24 ແລະ ເວລາຊາວເລມັນເຫັນວ່າພວກ
ເຂົາກຳລັງເດີນທັບມຸ້ງໜ້າໄປຫາແຜ່ນດິນ
ເຊຣາເຮັມລາ, ພວກເຂົາຈຶ່ງເກີດມີຄວາມ
ຢ້ານກົວຫລາຍທີ່ສຸດ, ຢ້ານວ່າຈະມີແຜນ
ການວາງໄວ້ເພື່ອຈະພາພວກເຂົາໄປສູ່
ຄວາມພິນາດ; ສະນັ້ນ ພວກເຂົາຈຶ່ງເລີ່ມ
ຖອຍຄືນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ,
ແທ້ຈິງແລ້ວ, ແມ່ນແຕ່ໄດ້ຖອຍກັບໄປທາງ
ເກົ່າຊຶ່ງພວກເຂົາໄດ້ຍົກມາ.
25 ແລະ ຈົ່ງເບິ່ງ, ມັນເປັນເວລາກາງຄືນ
ແລະ ພວກເຂົາຈຶ່ງໄດ້ຕັ້ງຄ້າຍຂຶ້ນ, ເພາະ
ວ່າຫົວໜ້ານາຍທະຫານຂອງຊາວເລມັນ
ຄິດວ່າ ຊາວນີໄຟຈະອ່ອນເພຍ ຍ້ອນການ
ເດີນທັບຂອງພວກເຂົາ; ແລະ ໂດຍຄິດວ່າ
ຕົນເອງໄດ້ຂັບໄລ່ກອງທັບທັງໝົດຂອງ
ຊາວນີໄຟໄປແລ້ວ ສະນັ້ນ ພວກເຂົາຈຶ່ງບໍ່
ຄິດອັນໃດເລີຍກ່ຽວກັບເມືອງແມນທາຍ
ນັ້ນ.
26 ບັດນີ້ ເຫດການໄດ້ບັງເກີດຂຶ້ນຄື
ເວລາຮອດຕອນກາງຄືນ, ຂ້າພະເຈົ້າບໍ່ໄດ້
ໃຫ້ຄົນຂອງຂ້າພະເຈົ້ານອນ, ແຕ່ວ່າໃຫ້

ເດີນທັບຕໍ່ໄປຕາມເສັ້ນທາງອື່ນມຸ້ງໜ້າໄປ
ຫາເມືອງແມນທາຍ.
27 ແລະ ຍ້ອນ ວ່າ ການ ເດີນ ທັບ ຂອງ
ພວກເຮົາໃນຕອນກາງຄືນ, ຈົ່ງເບິ່ງ, ໃນມື້
ຕໍ່ມາ ພວກເຮົາກໍເລີຍໜ້າຊາວເລມັນໄປ,
ເຖິງຂະໜາດທີ່ພວກເຮົາໄດ້ມາຮອດເມືອງ
ແມນທາຍກ່ອນພວກເຂົາ.
28 ແລະ ເຫດການໄດ້ບັງເກີດຂຶ້ນມາ
ຕາມນີ້ແລ້ວ, ເປັນຍ້ອນກົນອຸບາຍ, ພວກ
ເຮົາຈຶ່ງໄດ້ຍຶດເອົາເມືອງແມນທາຍໄດ້ໂດຍ
ບໍ່ໄດ້ເສຍເລືອດເນື້ອເລີຍ.
29 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ເວລາກອງທັບຂອງຊາວເລມັນໄດ້ກັບມາ
ໃກ້ເມືອງ, ແລະ ເຫັນວ່າພວກເຮົາຕຽມ
ພ້ອມທີ່ຈະພົບກັບພວກເຂົາຢູ່, ພວກເຂົາກໍ
ແປກປະຫລາດໃຈຫລາຍທີ່ສຸດ ແລະ ເກີດ
ຄວາມຢ້ານກົວຢ່າງໃຫຍ່ຫລວງຂຶ້ນ, ເຖິງ
ຂະໜາດທີ່ພວກເຂົາໄດ້ໜີເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານ.
30 ແທ້ຈິງແລ້ວ, ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ກອງທັບຂອງຊາວເລມັນໄດ້ໜີ
ອອກຈາກແຜ່ນດິນສ່ວນນີ້ທັງໝົດ. ແຕ່ຈົ່ງ
ເບິ່ງ, ພວກເຂົາໄດ້ເອົາພວກຜູ້ຍິງ ແລະ
ເດັກນ້ອຍເປັນຈຳນວນຫລວງຫລາຍຈາກ
ແຜ່ນດິນໄປນຳພວກເຂົາ.
31 ແລະ ໃນເວລານີ້ ເມືອງ *ກ*ຕ່າງໆທີ່
ຊາວເລມັນໄດ້ຍຶດເອົາໄປ ໄດ້ຕົກຢູ່ໃນ
ຄວາມຄອບຄອງຂອງພວກເຮົາແລ້ວ;
ແລະ ບິດາຂອງພວກເຮົາ ແລະ ຜູ້ຍິງຂອງ
ພວກເຮົາ ແລະ ເດັກນ້ອຍຂອງພວກເຮົາ
ກໍກຳລັງກັບຄືນໄປຫາເຮືອນຊານຂອງຕົນ,
ຍົກເວັ້ນແຕ່ພວກທີ່ຖືກຈັບໄປເປັນຊະເລີຍ
ເສິກ ແລະ ຖືກຊາວເລມັນພາໄປເທົ່ານັ້ນ.
32 ແຕ່ຈົ່ງເບິ່ງ, ກອງທັບຂອງພວກເຮົາ
ມີກຳລັງບໍ່ຫລາຍທີ່ຈະຮັກສາຫລາຍຫົວ
ເມືອງ ແລະ ຊັບສິນຢ່າງຫລວງຫລາຍເຊັ່ນ
ນີ້ໄວ້ໄດ້.
33 ແຕ່ຈົ່ງເບິ່ງ, ພວກເຮົາໄວ້ວາງໃຈໃນ
ພຣະເຈົ້າຂອງພວກເຮົາ ຜູ້ປະທານໄຊ
ຊະນະເໜືອແຜ່ນດິນໃຫ້ແກ່ພວກເຮົາ, ເຖິງ
ຂະໜາດທີ່ພວກເຮົາໄດ້ເມືອງ ແລະ ແຜ່ນ
ດິນເຫລົ່ານັ້ນຊຶ່ງເປັນຂອງພວກເຮົາຄືນມາ.
34 ບັດນີ້ພວກເຮົາບໍ່ຮູ້ຈັກເຖິງສາເຫດວ່າ
ດ້ວຍເຫດໃດຝ່າຍຜູ້ປົກຄອງຈຶ່ງບໍ່ສົ່ງກຳລັງ
ມາໃຫ້ພວກເຮົາ; ແລະ ພວກຜູ້ຊາຍທີ່ມາ
ຊ່ວຍພວກເຮົາກໍບໍ່ຮູ້ວ່າດ້ວຍເຫດໃດພວກ
ເຮົາຈຶ່ງບໍ່ໄດ້ຮັບກຳລັງເພີ່ມເຕີມ.
35 ຈົ່ງເບິ່ງ, ພວກເຮົາບໍ່ຮູ້ວ່າ ທ່ານກຳລັງ
ຕົກຢູ່ໃນຂັ້ນອັນຕະລາຍ, ແລະ ທ່ານໄດ້ນຳ
ກຳລັງໄປຊ່ວຍເຫລືອແຜ່ນດິນສ່ວນນັ້ນ; ຖ້າ
ຫາກເປັນເຊັ່ນນີ້ ພວກເຮົາກໍຈະບໍ່ຈົ່ມເລີຍ.
36 ແລະ ຖ້າຫາກມັນບໍ່ເປັນເຊັ່ນນີ້, ຈົ່ງ
ເບິ່ງ, ພວກເຮົາຢ້ານວ່າມັນຈະມີ *ກ*ການ
ແຕກແຍກໃນຝ່າຍຜູ້ປົກຄອງ, ເຂົາເຈົ້າຈຶ່ງ
ບໍ່ສົ່ງຄົນມາເພີ່ມອີກ; ເພາະພວກເຮົາຮູ້ຈັກ
ວ່າ ມັນມີຜູ້ຄົນຢູ່ຢ່າງຫລວງຫລາຍ, ຫລາຍ
ກວ່າທີ່ໄດ້ສົ່ງມາແລ້ວ.
37 ແຕ່ຈົ່ງເບິ່ງ, ມັນບໍ່ສຳຄັນເລີຍ—ພວກ
ເຮົາໄວ້ວາງໃຈວ່າພຣະເຈົ້າຈະ *ກ*ປົດປ່ອຍ
ພວກເຮົາ, ທັງໆທີ່ກອງທັບຂອງພວກເຮົາ
ອ່ອນເພຍ, ແທ້ຈິງແລ້ວ, ພຣະອົງໄດ້ປົດ
ປ່ອຍພວກເຮົາໃຫ້ພົ້ນຈາກກຳມືຂອງສັດຕູ
ຂອງພວກເຮົາ.
38 ຈົ່ງເບິ່ງ, ຕອນນີ້ຄືທ້າຍປີທີຊາວເກົ້າ,
ແລະ ພວກເຮົາໄດ້ເປັນເຈົ້າຂອງແຜ່ນດິນ
ຂອງພວກເຮົາ; ແລະ ຊາວເລມັນໄດ້ໜີກັບ
ໄປຫາແຜ່ນດິນນີໄຟແລ້ວ.
39 ແລະ ພວກລູກຊາຍຂອງຜູ້ຄົນຂອງ

31 *ກ* ແອວ 56:14. | 36 *ກ* ແອວ 61:1–5. | 37 *ກ* 2 ກສ 17:38–39.

ອຳໂມນ ຜູ້ ທີ່ ຂ້າ ພະ ເຈົ້າ ເວົ້າ ເຖິງ ດ້ວຍ
ຄວາມຍ້ອງຍໍນັ້ນ, ກໍຢູ່ກັບຂ້າພະເຈົ້າຢູ່
ເມືອງ ແມນທາຍ; ແລະ ພຣະຜູ້ເປັນເຈົ້າ
ໄດ້ຄ້ຳຊູພວກເຂົາ, ແທ້ຈິງແລ້ວ, ແລະ ໄດ້
ຄຸ້ມຄອງພວກເຂົາໃຫ້ພົ້ນຈາກການຖືກຂ້າ
ດ້ວຍດາບ, ເຖິງຂະໜາດທີ່ບໍ່ມີ [ກ]ຜູ້ໃດຖືກ
ຂ້າຕາຍເລີຍ.

40 ແຕ່ ຈົ່ງ ເບິ່ງ, ພວກ ເຂົາ ໄດ້ ຮັບ ບາດ
ເຈັບຫລາຍບ່ອນ; ເຖິງຢ່າງໃດກໍຕາມ ພວກ
ເຂົາຍັງໝັ້ນຄົງຢູ່ໃນ [ກ]ເສລີພາບ ເປັນດ້ວຍ
ເຫດນີ້ພຣະເຈົ້າຈຶ່ງເຮັດໃຫ້ພວກເຂົາເປັນ
ອິດສະລະ; ແລະ ນັບມື້ນັບວັນພວກເຂົາຍິ່ງ
ໝັ້ນຢູ່ໃນການລະນຶກເຖິງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຂົາຫລາຍຂຶ້ນ;
ແທ້ຈິງແລ້ວ, ພວກເຂົາຍຶດຖື ທີ່ຈະຮັກສາ
ຂໍ້ກຳນົດຂອງພຣະອົງ, ແລະ ການພິພາກ
ສາຂອງພຣະອົງ, ແລະ ພຣະບັນຍັດຂອງ
ພຣະອົງຕະຫລອດເວລາ; ແລະ ພວກເຂົາ
ມີສັດທາຢ່າງລົ້ນເຫລືອໃນຄຳທຳນາຍກ່ຽວ
ກັບສິ່ງທີ່ຈະມາເຖິງ.

41 ແລະ ບັດນີ້, ອ້າຍນ້ອງ ໂມໂຣໄນທີ່
ຮັກແພງຂອງຂ້າພະເຈົ້າ, ຂໍໃຫ້ພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງພວກເຮົາ, ຜູ້
ໄຖ່ພວກເຮົາ ແລະ ເຮັດໃຫ້ພວກເຮົາເປັນ
ອິດສະລະ ຈົ່ງໂປດຄຸ້ມຄອງທ່ານໄວ້ໃນທີ່
ປະທັບຂອງພຣະອົງຕະຫລອດໄປດ້ວຍ
ເຖີດ; ແທ້ຈິງແລ້ວ, ຂໍໃຫ້ພຣະອົງຈົ່ງໂປດ
ຄຸ້ມຄອງຜູ້ຄົນພວກນີ້, ເພື່ອພວກເຂົາຈະ
ໄດ້ຮັບຄວາມສຳເລັດໃນການຍຶດເອົາທຸກ
ສິ່ງທຸກຢ່າງທີ່ຊາວເລມັນໄດ້ຍຶດໄປຈາກ
ພວກເຮົາກັບຄືນມາ, ເພື່ອຈະໄດ້ຄ້ຳຊູພວກ
ເຮົາ. ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າຂໍຈົບ
ສານຂອງຂ້າພະເຈົ້າເທົ່ານີ້. ຂ້າພະເຈົ້າຄືຮີ
ລາມັນລູກຊາຍຂອງແອວມາ.

## ບົດທີ 59

*ໂມໂຣໄນຮ້ອງຂໍເພໂຮຣັນໃຫ້ເພີ່ມກຳລັງ
ກອງທັບຂອງຮີລາມັນ—ຊາວເລມັນຍຶດ
ເອົາເມືອງນີໄຟຮາ—ໂມໂຣໄນໃຈຮ້າຍໃຫ້
ຝ່າຍຜູ້ປົກຄອງ. ປະມານ 62 ປີ ກ່ອນ ຄ.ສ.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີທີ
ສາມສິບແຫ່ງການປົກຄອງຂອງຜູ້ຕັດສິນ
ດູແລຜູ້ຄົນຂອງນີໄຟ, ຫລັງຈາກໂມໂຣໄນ
ໄດ້ຮັບ [ກ]ສານຂອງຮີລາມັນ ແລະ ອ່ານ
ມັນແລ້ວ, ເພິ່ນກໍມີຄວາມປິຕິຍິນດີຢ່າງ
ຍິ່ງ ແລະ ເຕັມໄປດ້ວຍຄວາມຜາສຸກ, ແທ້
ຈິງແລ້ວ, ເພິ່ນມີຄວາມຊື່ນຊົມກັບຄວາມ
ສຳເລັດອັນຍິ່ງໃຫຍ່ ຊຶ່ງຮີລາມັນໄດ້ຮັບໃນ
ການຍຶດເອົາແຜ່ນດິນຕ່າງໆທີ່ເສຍໄປກັບ
ຄືນມາ.

2 ແທ້ຈິງແລ້ວ, ແລະ ເພິ່ນໄດ້ປະກາດໃຫ້
ຜູ້ຄົນທຸກຄົນຂອງເພິ່ນຮູ້ຈັກ, ແລະ ເພິ່ນໄດ້
ປະກາດໃຫ້ຜູ້ຄົນທີ່ອາໄສຢູ່ໃນອ້ອມແອ້ມ
ນັ້ນຮູ້ຈັກນຳອີກ, ເພື່ອພວກເຂົາຈະໄດ້ປິຕິ
ຍິນດີນຳກັນ.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ສົ່ງສານ [ກ]ສະບັບໜຶ່ງໄປຫາ [ຂ]ເພໂຮ
ຣັນໂດຍທັນທີ, ໂດຍປາດຖະໜາໃຫ້ເພິ່ນ
ເກນທະຫານ ເພື່ອເພີ່ມກຳລັງໃຫ້ຮີລາມັນ,
ຫລື ກອງທັບຂອງຮີລາມັນ, ເຖິງຂະໜາດ
ທີ່ເພິ່ນຈະສາມາດຮັກສາແຜ່ນດິນສ່ວນນັ້ນ
ໄວ້ໄດ້ຢ່າງສະບາຍ ຊຶ່ງເພິ່ນໄດ້ຮັບການ
ຊ່ວຍເຫລືອຢ່າງແປກປະຫລາດໃນການ
ຍຶດເອົາມັນຄືນມາໄດ້.

4 ແລະ ເຫດການໄດ້ບັງເກີດຂຶ້ນເວລາ
ໂມໂຣໄນສົ່ງສານນີ້ໄປຫາແຜ່ນດິນເຊຣາ
ເຮັມລາແລ້ວ, ເພິ່ນໄດ້ເລີ່ມວາງແຜນອີກ
ເພື່ອເພິ່ນຈະໄດ້ສິ່ງຂອງທັງໝົດ ແລະ ຫົວ

39 *ກ* ແອວ 56:56.
40 *ກ* ຄມພ ເສລີພາບ.
**59** 1 *ກ* ແອວ 56:1.
3 *ກ* ແອວ 60:1–3.
*ຂ* ແອວ 50:40.

ເມືອງຕ່າງໆທີ່ເຫລືອຢູ່ນັ້ນຄືນມາ ຊຶ່ງຊາວເລມັນໄດ້ຍຶດເອົາໄປຈາກພວກເຂົາ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄືຂະນະທີ່ໂມໂຣໄນກຳລັງຕຽມຕົວທີ່ຈະໄປສູ້ຮົບກັບຊາວເລມັນຢູ່ນັ້ນ, ຈົ່ງເບິ່ງ, ຜູ້ຄົນຂອງນີໄຟຮາທີ່ມາເຕົ້າໂຮມກັນຈາກເມືອງໂມໂຣໄນ ແລະ ຈາກເມືອງລີໄຮ ແລະ ຈາກເມືອງໂມຣິອານທັນກຳລັງຖືກຊາວເລມັນໂຈມຕີ.

6 ແທ້ຈິງແລ້ວ, ພວກທີ່ຖືກບັງຄັບໃຫ້ໜີຈາກແຜ່ນດິນແມນທາຍ, ແລະ ຈາກແຜ່ນດິນອ້ອມແອ້ມນັ້ນໄດ້ຂ້າມມາເຂົ້າຮ່ວມກັບຊາວເລມັນໃນແຜ່ນດິນສ່ວນນີ້.

7 ແລະ ພວກເຂົາມີຜູ້ຄົນເປັນຈຳນວນຫລວງຫລາຍ, ແທ້ຈິງແລ້ວ, ແຕ່ລະມື້ພວກເຂົາໄດ້ຮັບກຳລັງເພີ່ມຂຶ້ນ, ໂດຍຄຳສັ່ງຂອງອາມໂມຣອນ, ພວກເຂົາຈຶ່ງໄດ້ຍົກມາສູ້ຮົບກັບຜູ້ຄົນຂອງນີໄຟຮາ, ແລະ ພວກເຂົາໄດ້ເລີ່ມຂ້າພວກເຂົາຈົນວ່າຜູ້ຄົນເປັນຈຳນວນຫລວງຫລາຍໄດ້ຖືກຂ້າຕາຍ.

8 ແລະ ກອງທັບຂອງພວກເຂົາມີກຳລັງຢ່າງຫລວງຫລາຍ ຈົນວ່າຜູ້ຄົນຂອງນີໄຟຮາທີ່ເຫລືອຢູ່ຈຳເປັນຕ້ອງໜີໄປ; ແລະພວກເຂົາໄດ້ເຂົ້າມາຮ່ວມກັບກອງທັບຂອງໂມໂຣໄນ.

9 ແລະ ບັດນີ້ຕາມຄວາມຄິດຂອງໂມໂຣໄນນັ້ນ ເພິ່ນຄວນສົ່ງຄົນໄປເມືອງນີໄຟຮາ, ເພື່ອຊ່ວຍເຫລືອຜູ້ຄົນໃຫ້ຮັກສາເມືອງນີ້, ແລະ ໂດຍທີ່ຮູ້ວ່າການທີ່ຈະຮັກສາເມືອງບໍ່ໃຫ້ຕົກຢູ່ໃນກຳມືຂອງຊາວເລມັນນັ້ນແມ່ນງ່າຍກວ່າຈະໄປຕີເອົາຄືນ, ເພິ່ນຄິດວ່າຜູ້ຄົນໃນເມືອງນີ້ຈະຮັກສາເມືອງໄວ້ໄດ້ຢ່າງງ່າຍດາຍ.

10 ສະນັ້ນ ເພິ່ນຈຶ່ງສັ່ງໃຫ້ກຳລັງທັງໝົດຂອງເພິ່ນຢູ່ຮັກສາບ່ອນຕ່າງໆຊຶ່ງເພິ່ນໄດ້ຍຶດຄືນມາໄດ້.

11 ແລະ ບັດນີ້, ເມື່ອໂມໂຣໄນຮູ້ວ່າເມືອງນີໄຟຮາຖືກຍຶດເອົາໄປແລ້ວ, ເພິ່ນກໍເສົ້າສະຫລົດໃຈຫລາຍທີ່ສຸດ ແລະ ເກີດມີຄວາມສົງໃສຂຶ້ນມາຍ້ອນວ່າຄວາມຊົ່ວຮ້າຍຂອງຜູ້ຄົນ, ຖ້າຫາກພວກເຂົາຄວນຕົກໄປຢູ່ໃນກຳມືຂອງພີ່ນ້ອງຂອງພວກເຂົາຫລືບໍ່.

12 ບັດນີ້ເລື່ອງນີ້ກໍເກີດຂຶ້ນກັບຫົວໜ້ານາຍທະຫານຂອງເພິ່ນທັງໝົດ. ເຂົາເຈົ້າກໍສົງໃສ ແລະ ແປກປະຫລາດໃຈຄືກັນເພາະຄວາມຊົ່ວຮ້າຍຂອງຜູ້ຄົນ, ແລະ ມັນແປກປະຫລາດໃຈຫລາຍກ່ຽວກັບຊາວເລມັນທີ່ມີອຳນາດເໜືອກວ່າພວກເຂົາ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນໄດ້ຄຽດແຄ້ນໃຫ້ຝ່າຍຜູ້ປົກຄອງ, ຍ້ອນວ່າເຂົາເຈົ້າ [ກ]ບໍ່ເອົາຫົວຊາກ່ຽວກັບອິດສະລະພາບຂອງປະເທດຊາດຂອງຕົນ.

## ບົດທີ 60

*ໂມໂຣໄນຕໍ່ວ່າກັບເພໂຮຣັນພ້ອມທັງຝ່າຍຜູ້ປົກຄອງໃນການບໍ່ເອົາຫົວຊາຕໍ່ກອງທັບ—ພຣະຜູ້ເປັນເຈົ້າໄດ້ຍອມໃຫ້ຄົນຊອບທຳຖືກຂ້າ—ຊາວນີໄຟຕ້ອງໃຊ້ອຳນາດ, ແລະ ໃຊ້ທຸກວິທີເພື່ອປົດປ່ອຍຕົນເອງໃຫ້ພົ້ນຈາກສັດຕູຂອງພວກເຂົາ—ໂມໂຣໄນຂູ່ວ່າຈະຕໍ່ສູ້ກັບຝ່າຍຜູ້ປົກຄອງເວັ້ນເສຍແຕ່ຝ່າຍຜູ້ປົກຄອງຈະໃຫ້ຄວາມຊ່ວຍເຫລືອແກ່ກອງທັບຂອງເພິ່ນ. ປະມານ 62 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ຂຽນໜັງສືໄປຫາຜູ້ປົກຄອງແຜ່ນດິນອີກ

13 *ກ* ແອວ 58:34; 61:2–3.

ຜູ້ຊື່ວ່າເພໂຮຣັນ, ແລະ ນີ້ຄືຂໍ້ຄວາມທີ່ເພິ່ນ
ຂຽນໄປ, ມີຄວາມວ່າ: ຈົ່ງເບິ່ງ, ຂ້າພະເຈົ້າ
ໄດ້ສົ່ງສານນີ້ມາຫາເພໂຮຣັນທີ່ຢູ່ໃນເມືອງ
ເຊຣາເຮັມລາ, ຜູ້ເປັນ [ກ]ຫົວໜ້າຜູ້ຕັດສິນ
ແລະ ປົກຄອງແຜ່ນດິນທັງໝົດ, ແລະ ມາ
ຫາທຸກຄົນທີ່ໄດ້ຮັບການເລືອກຕັ້ງຂຶ້ນໂດຍ
ສຽງຂອງຜູ້ຄົນພວກນີ້ເພື່ອປົກຄອງ ແລະ
ດຳເນີນການງານກ່ຽວກັບສົງຄາມເທື່ອນີ້.
2 ເພາະຈົ່ງເບິ່ງ, ຂ້າພະເຈົ້າມີສິ່ງທີ່ຈະ
ກ່າວກັບຜູ້ຄົນເຫລົ່ານີ້ ເປັນການກ່າວໂທດ;
ເພາະຈົ່ງເບິ່ງ, ຕົວພວກທ່ານເອງໄດ້ຖືກ
ແຕ່ງຕັ້ງໃຫ້ເຕົ້າໂຮມຜູ້ຄົນ, ແລະ ຈັດຫາ
ຫອກ ແລະ ດາບ, ແລະ ຫາອາວຸດແຫ່ງ
ສົງຄາມທຸກຊະນິດໃຫ້ພວກເຂົາ, ແລະ ສົ່ງ
ພວກເຂົາອອກໄປສູ້ຮົບກັບຊາວເລມັນ, ບໍ່
ວ່າຈະເປັນບ່ອນໃດກໍຕາມ ທີ່ພວກເຂົາຈະ
ເຂົ້າມາໃນແຜ່ນດິນຂອງພວກເຮົາ.
3 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບ
ພວກທ່ານໂດຍກົງວ່າ, ແລະ ຄົນຂອງຂ້າ
ພະເຈົ້າ, ແລະ ຮີລາມັນກັບຄົນຂອງເພິ່ນ
ນຳອີກ, ຕ້ອງທົນທຸກທໍລະມານຢ່າງແສນ
ສາຫັດ; ແທ້ຈິງແລ້ວ, ຕ້ອງທົນຕໍ່ຄວາມຫິວ
ເຂົ້າ, ຫິວນ້ຳ, ແລະ ຄວາມອິດເມື່ອຍ, ແລະ
ຄວາມທຸກນາໆປະການ.
4 ແຕ່ຈົ່ງເບິ່ງ, ຖ້າຫາກພວກເຮົາຕ້ອງອົດ
ທົນຢູ່ກັບສິ່ງເຫລົ່ານີ້ເທົ່ານັ້ນ ພວກເຮົາກໍ
ຈະບໍ່ຈົ່ມວ່າ ແລະ ຮ້ອງທຸກເລີຍ.
5 ແຕ່ຈົ່ງເບິ່ງ, ຜູ້ຄົນຂອງພວກເຮົາໄດ້ຖືກ
ຂ້າຕາຍໄປເປັນຈຳນວນຫລວງຫລາຍ; ແທ້
ຈິງແລ້ວ, ຫລາຍພັນຄົນໄດ້ລົ້ມຕາຍດ້ວຍ
ດາບ, ຊຶ່ງມັນບໍ່ຄວນເປັນໄປເລີຍຖ້າຫາກ
ພວກທ່ານໄດ້ສົ່ງກຳລັງ ແລະ ໃຫ້ຄວາມ
ຊ່ວຍເຫລືອແກ່ກອງທັບຂອງພວກເຮົາພຽງ
ພໍ. ແທ້ຈິງແລ້ວ, ພວກທ່ານບໍ່ໄດ້ເອົາຫົວຊາ
ກັບພວກເຮົາເລີຍ.
6 ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາຢາກຮູ້
ຈັກສາເຫດຂອງການບໍ່ເອົາຫົວຊາອັນໃຫຍ່
ຫລວງນີ້; ແທ້ຈິງແລ້ວ, ພວກເຮົາຢາກຮູ້ຈັກ
ວ່າ ເປັນຫຍັງພວກທ່ານຈຶ່ງບໍ່ເອົາໃຈໃສ່.
7 ພວກທ່ານຄິດບໍວ່າ ພວກທ່ານຈະນັ່ງ
ຢູ່ໃນບັນລັງຂອງພວກທ່ານໄດ້ຢ່າງໂງ່ຈ້າ
ແລະ ບໍ່ມີຄວາມຄິດໃນຂະນະທີ່ສັດຕູຂອງ
ພວກທ່ານກຳລັງແຜ່ຂະຫຍາຍວຽກງານ
ແຫ່ງຄວາມຕາຍອ້ອມຮອບຕົວຂອງພວກ
ທ່ານຢູ່? ແທ້ຈິງແລ້ວ, ໃນເວລານີ້ສັດຕູກຳ
ລັງຂ້າພີ່ນ້ອງຂອງພວກທ່ານຢູ່ເປັນພັນໆ
ຄົນ—
8 ແທ້ ຈິງ ແລ້ວ, ພວກ ເຂົາ ໄດ້ ລໍ ຄອຍ
ຄວາມ ຄຸ້ມ ຄອງ ຈາກ ພວກ ທ່ານ, ແທ້ ຈິງ
ແລ້ວ, ໄດ້ເລືອກພວກທ່ານໃຫ້ຢູ່ໃນຖານະ
ນີ້ ເພື່ອພວກທ່ານຈະໄດ້ຊ່ວຍເຫລືອພວກ
ເຂົາ, ແທ້ຈິງແລ້ວ, ເພື່ອພວກທ່ານຈະໄດ້
ສົ່ງກອງທັບໄປໃຫ້ພວກເຂົາ, ເພື່ອພວກ
ເຂົາຈະມີກຳລັງເພີ່ມຂຶ້ນ, ແລະ ຊ່ວຍເຫລືອ
ໃຫ້ຫລາຍພັນຄົນ ພົ້ນຈາກການຕາຍດ້ວຍ
ດາບ.
9 ແຕ່ຈົ່ງເບິ່ງ, ນີ້ຍັງບໍ່ໝົດ—ພວກທ່ານ
ໄດ້ກັກສະບຽງອາຫານໄວ້ ບໍ່ສົ່ງໄປ ໃຫ້
ພວກເຂົາ, ເຖິງຂະໜາດທີ່ຄົນຈຳນວນຢ່າງ
ຫລວງຫລາຍໄດ້ຕໍ່ສູ້ ແລະ ຕ້ອງເສຍຊີວິດ
ໄປ ຍ້ອນວ່າພວກເຂົາມີຄວາມປາດຖະໜາ
ອັນຍິ່ງໃຫຍ່ທີ່ຈະໃຫ້ຜູ້ຄົນພວກນີ້ມີຄວາມ
ຜາສຸກ; ແທ້ຈິງແລ້ວ, ແລະ ດ້ວຍເຫດນີ້
ພວກເຂົາຈຶ່ງໄດ້ຕໍ່ສູ້ ແລະ ກຳລັງຈະ [ກ]ຕາຍ
ດ້ວຍຄວາມອຶດຫິວ, ເພາະການບໍ່ເອົາຫົວ
ຊາຂອງພວກທ່ານນີ້.
10 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ—ເພາະວ່າພວກທ່ານຄວນ

**60** 1*ກ* ແອວ 50:39–40.
9*ກ* ແອວ 58:7.

ຈະ ເປັນ ທີ່ ຮັກ ຫອມ; ດັ່ງ ນັ້ນ, ແລະ ພວກ
ທ່ານຄວນຈະກະຕຸ້ນຕົວເອງໃຫ້ພາກພຽນ
ຫລາຍຂຶ້ນເພື່ອຄວາມຜາສຸກ ແລະ ອິດສະ
ລະພາບ ຂອງ ຜູ້ ຄົນ ພວກ ນີ້; ແຕ່ ຈົ່ງ ເບິ່ງ,
ພວກທ່ານບໍ່ເອົາຫົວຊາພວກເຂົາເລີຍ ເຖິງ
ຂະໜາດທີ່ ເລືອດຂອງຫລາຍພັນຄົນ ຈະ
ໄຫລ ລົງ ມາ ເທິງພວກທ່ານ ເພື່ອການ ແກ້
ແຄ້ນ; ແທ້ ຈິງ ແລ້ວ, ພຣະ ເຈົ້າຮູ້ຈັກການ
ຮ້ອງໄຫ້ ແລະ ຄວາມທຸກທໍລະມານທັງໝົດ
ຂອງພວກເຂົາແລ້ວ—

11 ຈົ່ງ ເບິ່ງ, ພວກ ທ່ານ ຄິດ ບໍ ວ່າ ພວກ
ທ່ານຈະນັ່ງຢູ່ໃນບັນລັງຂອງພວກທ່ານໄດ້,
ແລະ ກໍຍ້ອນວ່າພຣະກະລຸນາທິຄຸນຂອງ
ພຣະເຈົ້າ ພວກທ່ານບໍ່ຕ້ອງເຮັດຫຍັງເລີຍ
ແລະ ພຣະອົງຈະປົດປ່ອຍພວກທ່ານ? ຈົ່ງ
ເບິ່ງ, ຖ້າຫາກພວກທ່ານຄິດແນວນີ້, ພວກ
ທ່ານກໍຄິດຜິດໄປແລ້ວ.

12 ພວກທ່ານ [ກ]ຄິດບໍວ່າ, ພີ່ນ້ອງຂອງ
ພວກທ່ານຖືກຂ້າຕາຍ ກໍຍ້ອນວ່າຄວາມ
ຊົ່ວຮ້າຍຂອງພວກເຂົາ? ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ ຖ້າຫາກພວກທ່ານຄິດ
ແບບນີ້ ພວກທ່ານກໍຄິດຜິດໄປແລ້ວ; ເພາະ
ຂ້າພະເຈົ້າກ່າວກັບພວກທ່ານວ່າ, ພວກ
ທ່ານຈະຖືກລົງໂທດສຳລັບການຕາຍຂອງ
ຄົນເປັນຈຳນວນຫລວງຫລາຍນັ້ນ;

13 ເພາະວ່າພຣະຜູ້ເປັນເຈົ້າໄດ້ຍອມໃຫ້
[ກ]ຄົນຊອບທຳຕ້ອງຖືກຂ້າ ເພື່ອຄວາມຍຸດຕິ
ທຳ ແລະ ການພິພາກສາຂອງພຣະອົງຈະ
ໄດ້ມາຫາຄົນຊົ່ວ; ສະນັ້ນ ພວກທ່ານບໍ່ຕ້ອງ
ຄິດວ່າຄົນຊອບທຳຕົກໄປ ຍ້ອນວ່າພວກ
ເຂົາຖືກຂ້າ; ແຕ່ຈົ່ງເບິ່ງ, ພວກເຂົາໄດ້ເຂົ້າ
ໄປໃນທີ່ພັກຂອງພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຂົາແລ້ວ.

14 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບພວກທ່ານວ່າ, ຂ້າພະເຈົ້າຢ້ານຫລາຍ
ທີ່ສຸດວ່າ ການພິພາກສາຂອງພຣະເຈົ້າຈະ
ມາຫາຜູ້ຄົນພວກນີ້, ຍ້ອນວ່າຄວາມບໍ່ເອົາ
ຫົວຊາ, ແທ້ຈິງແລ້ວ, ແມ່ນຄວາມບໍ່ເອົາຫົວ
ຊາຂອງຝ່າຍຜູ້ປົກຄອງຂອງພວກເຮົາທີ່ບໍ່
ເອົາໃຈໃສ່ເລີຍກັບພີ່ນ້ອງຂອງຕົນ, ແທ້ຈິງ
ແລ້ວ, ພວກທ່ານບໍ່ເອົາໃຈໃສ່ເລີຍກັບຜູ້ທີ່
ຖືກຂ້າຕາຍ.

15 ເພາະ ຖ້າ ຫາກ ມັນ ບໍ່ ແມ່ນ ຍ້ອນ
[ກ]ຄວາມຊົ່ວຮ້າຍ ຊຶ່ງເລີ່ມຕົ້ນມາຈາກພວກ
ຫົວ ໜ້າ ຂອງ ພວກ ເຮົາ ກ່ອນ ແລ້ວ, ພວກ
ເຮົາກໍຈະຕ້ານທານສັດຕູຂອງພວກເຮົາໄດ້
ເພື່ອບໍ່ ໃຫ້ພວກເຂົາມີອຳນາດ ເໜືອກວ່າ
ພວກເຮົາ.

16 ແທ້ ຈິງ ແລ້ວ, ຖ້າ ຫາກ ມັນ ບໍ່ ແມ່ນ
ຍ້ອນ [ກ]ສົງຄາມ ຊຶ່ງເກີດຂຶ້ນລະຫວ່າງພວກ
ເຮົາ ເອງ; ແທ້ຈິງແລ້ວ, ຖ້າຫາກບໍ່ ແມ່ນ
ຍ້ອນ [ຂ]ກຸ່ມ ນິຍົມກະສັດ ເຫລົ່ານີ້ ຊຶ່ງເປັນ
ເຫດ ໃຫ້ການນອງເລືອດອັນແສນສາຫັດ
ເຊັ່ນ ນີ້ ເກີດ ຂຶ້ນ ໃນ ບັນ ດາ ພວກ ເຮົາ ເອງ;
ແທ້ຈິງແລ້ວ, ໃນເວລາທີ່ພວກ ເຮົາກຳລັງ
ຂັດແຍ້ງກັນ ຖ້າຫາກພວກເຮົາຮ່ວມກຳລັງ
ເຂົ້າກັນຄືກັນກັບພວກເຮົາເຄີຍເຮັດມາແຕ່
ກ່ອນແລ້ວ; ແທ້ຈິງແລ້ວ, ຖ້າຫາກບໍ່ ແມ່ນ
ຍ້ອນ ຄວາມ ຢາກ ໄດ້ອຳນາດ ແລະ ສິດ
ອຳນາດ ຊຶ່ງກຸ່ມ ນິຍົມກະສັດ ໄດ້ກໍ່ຄວາມ
ວຸ້ນວາຍກັບພວກເຮົາຢູ່ນີ້, ຖ້າຫາກພວກ
ເຂົາຊື່ສັດຕໍ່ອຸດົມການແຫ່ງອິດສະລະພາບ
ຂອງພວກ ເຂົາ, ແລະ ເຂົ້າມາຮ່ວມກັບ
ພວກເຮົາ, ແລະ ອອກໄປຕໍ່ສູ້ກັບສັດຕູຂອງ
ພວກເຮົາ ແທນທີ່ຈະຍົກດາບຂຶ້ນຕໍ່ສູ້ກັນ
ເອງ, ອັນເປັນເຫດໃຫ້ເກີດການນອງເລືອດ
ເກີດຂຶ້ນ ໃນລະຫວ່າງພວກເຮົາເອງ; ແທ້
ຈິງແລ້ວ, ຖ້າຫາກພວກເຮົາອອກໄປສູ້ຮົບ

12 ກ ລກ 13:1–5.
13 ກ ແອວ 14:10–11;
ຄພ 42:46–47.
15 ກ ແອວ 51:9, 13.
16 ກ ແອວ 51:16–19.
ຂ ແອວ 51:5, 8.

ກັບສັດຕູດ້ວຍພະລັງຂອງພຣະຜູ້ເປັນເຈົ້າ,
ພວກເຮົາກໍຈະເຮັດໃຫ້ສັດຕູຂອງພວກເຮົາ
ຜ່າຍແພ້ໄປ, ແລະ ມັນຈະເປັນໄປເພື່ອໃຫ້
ພຣະຄຳຂອງພຣະອົງສຳເລັດ.
17 ແຕ່ຈົ່ງເບິ່ງ, ບັດນີ້ຊາວເລມັນກຳລັງ
ມາໂຈມຕີພວກເຮົາຢູ່, ກຳລັງຍຶດເອົາແຜ່ນ
ດິນຂອງພວກເຮົາໄປ, ແລະ ພວກເຂົາກຳ
ລັງຂ້າຜູ້ຄົນຂອງພວກເຮົາດ້ວຍດາບ, ແທ້
ຈິງແລ້ວ, ພວກແມ່ຍິງຂອງພວກເຮົາ ແລະ
ເດັກນ້ອຍຂອງພວກເຮົາ, ແລະ ກໍຖືກຈັບ
ໄປເປັນຊະເລີຍນຳອີກ, ເຮັດໃຫ້ພວກ
ເຂົາຕ້ອງໄດ້ຮັບຄວາມທຸກນາໆປະການ,
ແລະ ສິ່ງນີ້ເກີດຂຶ້ນຍ້ອນຄວາມຊົ່ວຮ້າຍທີ່
ສຸດຂອງຜູ້ທີ່ສະແຫວງຫາອຳນາດ ແລະ
ສິດອຳນາດ, ແທ້ຈິງແລ້ວ, ແມ່ນກຸ່ມນິຍົມ
ກະສັດເຫລົ່ານັ້ນ.
18 ແຕ່ເປັນຫຍັງຂ້າພະເຈົ້າຈຶ່ງຄວນເວົ້າ
ຍືດຍາວກ່ຽວກັບເລື່ອງນີ້? ເພາະພວກເຮົາ
ບໍ່ຮູ້ຈັກວ່າພວກທ່ານເອງກຳລັງສະແຫວງ
ຫາສິດອຳນາດຢູ່ຫລືບໍ່. ພວກເຮົາບໍ່ຮູ້
ຈັກວ່າພວກທ່ານເອງກໍເປັນຜູ້ທໍລະຍົດຕໍ່
ປະເທດຊາດຂອງພວກທ່ານຄືກັນຫລືບໍ່.
19 ຫລື ວ່າພວກທ່ານບໍ່ເອົາຫົວຊາຍ້ອນ
ວ່າ ພວກທ່ານຢູ່ໃນໃຈກາງຂອງປະເທດ
ແລະ ພວກທ່ານຖືກຫຸ້ມລ້ອມດ້ວຍກຳລັງ
ອັນແໜ້ນໜາຊັ້ນບໍ, ຈຶ່ງວ່າພວກທ່ານບໍ່ໄດ້
ຈັດສົ່ງອາຫານໄປໃຫ້ພວກເຮົາ, ແລະ ບໍ່ສົ່ງ
ຄົນໄປເພີ່ມກຳລັງກອງທັບຂອງພວກເຮົາ?
20 ພວກທ່ານລືມພຣະບັນຍັດຂອງອົງ
ພຣະຜູ້ເປັນເຈົ້າຂອງພວກທ່ານແລ້ວບໍ?
ແທ້ຈິງແລ້ວ, ພວກທ່ານລືມການເປັນຊະ
ເລີຍຂອງບັນພະບຸລຸດຂອງພວກເຮົາແລ້ວ
ບໍ? ພວກທ່ານລືມແລ້ວບໍວ່າ ພວກເຮົາໄດ້
ຮັບການປົດປ່ອຍໃຫ້ພົ້ນຈາກກຳມືຂອງສັດ
ຕູມາຫລາຍເທື່ອແລ້ວ?
21 ຫລື ວ່າພວກທ່ານຄິດວ່າພຣະຜູ້ເປັນ
ເຈົ້າຈະປົດປ່ອຍພວກເຮົາຕໍ່ໄປຢູ່ບໍ, ໃນ
ຂະນະທີ່ພວກເຮົານັ່ງຢູ່ເທິງບັນລັງ ແລະ ບໍ່
ໃຊ້ສິ່ງທີ່ພຣະຜູ້ເປັນເຈົ້າຈັດຫາໄວ້ໃຫ້ເປັນ
ປະໂຫຍດ?
22 ແທ້ຈິງແລ້ວ, ພວກທ່ານຈະນັ່ງຢູ່ລ້າໆ
ໄດ້ບໍ ໃນຂະນະທີ່ພວກທ່ານຖືກຫຸ້ມລ້ອມ
ດ້ວຍຄົນຫລາຍພັນຄົນ, ແທ້ຈິງແລ້ວ, ນັບ
ເປັນຫລາຍໝື່ນຄົນຜູ້ຊຶ່ງນັ່ງຢູ່ລ້າໆ, ໃນ
ຂະນະທີ່ຜູ້ຄົນຫລາຍພັນຄົນທີ່ຢູ່ທາງຊາຍ
ແດນກຳລັງລົ້ມຕາຍດ້ວຍດາບ, ແທ້ຈິງ
ແລ້ວ, ພວກເຂົາໄດ້ຮັບບາດເຈັບ ແລະ
ເສຍເລືອດເນື້ອໄປ?
23 ພວກທ່ານຄິດບໍວ່າ ພຣະເຈົ້າຈະຖື
ວ່າພວກທ່ານບໍ່ມີຄວາມຜິດຂະນະທີ່ພວກ
ທ່ານນັ່ງຢູ່ຢ່າງເສີຍເມີຍ ແລະ ເບິ່ງສິ່ງ
ເຫລົ່ານີ້? ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ບໍ່ເລີຍ. ບັດນີ້ຂ້າພະເຈົ້າຢາກໃຫ້
ພວກທ່ານຈື່ຈຳໄວ້ວ່າ ພຣະເຈົ້າໄດ້ກ່າວ
ວ່າ ພວກເຮົາຕ້ອງເຮັດໃຫ້ພາຊະນະ [ກ]ຂ້າງ
ໃນສະອາດເສຍກ່ອນ, ແລ້ວຈຶ່ງເຮັດໃຫ້ພາ
ຊະນະຂ້າງນອກສະອາດນຳດ້ວຍ.
24 ແລະ ບັດນີ້, ຖ້າຫາກພວກທ່ານບໍ່
ກັບໃຈຈາກສິ່ງທີ່ພວກທ່ານໄດ້ເຮັດມານັ້ນ,
ແລະ ເລີ່ມຕື່ນທຳງານ, ແລະ ສົ່ງອາຫານ
ແລະ ຄົນມາໃຫ້ພວກເຮົາຢ່າງໄວ, ແລະ ສົ່ງ
ໄປໃຫ້ຮີລາມັນນຳອີກ, ເພື່ອເພິ່ນຈະໄດ້ຄ້ຳ
ຊູພາກສ່ວນເຫລົ່ານັ້ນຂອງປະເທດຂອງ
ພວກເຮົາໄວ້, ຊຶ່ງເພິ່ນຍຶດຄືນມາໄດ້, ແລະ
ເພື່ອພວກເຮົາຈະໄດ້ແຜ່ນດິນໃນຄວາມ
ຄອບຄອງຂອງພວກເຮົາທີ່ຍັງເຫລືອຢູ່ໃນ
ສ່ວນເຫລົ່ານີ້ຄືນມາ, ຈົ່ງເບິ່ງ ມັນເປັນການ
ສົມຄວນທີ່ພວກເຮົາຈະບໍ່ລົບກວນຊາວ

23 ກ ມທ 23:25–26.

ເລມັນອີກຕໍ່ໄປ ຈົນກວ່າພວກເຮົາຈະໃຫ້
ພາຊະນະຂ້າງໃນຂອງພວກເຮົາສະອາດ
ເສຍກ່ອນ, ແທ້ຈິງແລ້ວ, ແມ່ນຫົວໜ້າຝ່າຍ
ຜູ້ປົກຄອງຂອງພວກເຮົາ.
25 ແລະ ຖ້າຫາກພວກທ່ານບໍ່ຍອມເຮັດ
ຕາມສານນີ້, ແລະ ອອກມາສະແດງໃຫ້
ຂ້າພະເຈົ້າເຫັນ [ກ]ວິນຍານແຫ່ງອິດສະລະ
ພາບອັນແທ້ຈິງ, ແລະ ພະຍາຍາມເສີມກຳ
ລັງກອງທັບຂອງພວກເຮົາໃຫ້ເຂັ້ມແຂງ,
ແລະ ສົ່ງອາຫານເພື່ອມາລ້ຽງພວກເຂົາ
ແລ້ວ, ຈົ່ງເບິ່ງ, ຂ້າພະເຈົ້າຈະປະໃຫ້ກຸ່ມ
ອິດສະລະສ່ວນໜຶ່ງຂອງຂ້າພະເຈົ້າຮັກສາ
ແຜ່ນດິນສ່ວນນີ້ໄວ້, ແລະ ຂ້າພະເຈົ້າຈະ
ປະພະລັງ ແລະ ພອນຂອງພຣະເຈົ້າໄວ້ກັບ
ພວກເຂົາເພື່ອບໍ່ໃຫ້ອຳນາດອັນໃດມາທຳ
ລາຍພວກເຂົາໄດ້—
26 ແລະ ມັນຈະເປັນໄປຍ້ອນວ່າສັດທາ
ອັນໃຫຍ່ຫລວງຂອງພວກເຂົາ, ແລະ
ຄວາມອົດທົນຕໍ່ຄວາມຍາກລຳບາກນາໆ
ປະການຂອງພວກເຂົາ—
27 ແລະ ຂ້າພະເຈົ້າຈະມາຫາພວກ
ທ່ານ, ແລະ ຖ້າຫາກຈະມີຜູ້ໃດຜູ້ໜຶ່ງໃນບັນ
ດາພວກທ່ານປາດຖະໜາຢາກມີອິດສະ
ລະພາບຢູ່, ແທ້ຈິງແລ້ວ, ຖ້າຫາກມັນຈະ
ມີແມ່ນແຕ່ແສງແຫ່ງອິດສະລະພາບໜ້ອຍ
ໜຶ່ງເຫລືອຢູ່, ຈົ່ງເບິ່ງ ຂ້າພະເຈົ້າຈະຍຸຍົງ
ໃຫ້ເກີດການກະບົດຂຶ້ນໃນບັນດາພວກ
ທ່ານ, ຈົນວ່າພວກທີ່ປາດຖະໜາຈະແຍ້ງ
ຊີງເອົາອຳນາດ ແລະ ສິດອຳນາດ ຈະໝົດ
ສິ້ນໄປ.
28 ແທ້ຈິງແລ້ວ, ຈົ່ງເບິ່ງ ຂ້າພະເຈົ້າບໍ່
ຢ້ານອຳນາດ ຫລື ສິດອຳນາດຂອງພວກ
ທ່ານເລີຍ, ແຕ່ຄື [ກ]ພຣະເຈົ້າຂອງຂ້າພະ
ເຈົ້າທີ່ຂ້າພະເຈົ້າຢ້ານກົວ; ແລະ ຕາມພຣະ
ບັນຍັດຂອງພຣະອົງທີ່ຂ້າພະເຈົ້າໄດ້ຈັບ
ດາບເພື່ອປ້ອງກັນອຸດົມການຂອງປະເທດ
ຊາດຂອງຂ້າພະເຈົ້າໄວ້, ແລະ ຍ້ອນ
ຄວາມຊົ່ວຮ້າຍຂອງພວກທ່ານ ພວກເຮົາ
ຈຶ່ງຕ້ອງໄດ້ຮັບຄວາມເສຍຫາຍຢ່າງໜັກ
ເຊັ່ນນີ້.
29 ຈົ່ງເບິ່ງ ມັນເຖິງເວລາແລ້ວ, ແທ້
ຈິງແລ້ວ, ບັດນີ້ເວລາມາຮອດແລ້ວ ຖ້າ
ຫາກພວກທ່ານບໍ່ຕື່ນຕົວໃນການປ້ອງກັນ
ປະເທດຊາດ ແລະ ລູກຫລານຂອງພວກ
ທ່ານແລ້ວ, [ກ]ດາບແຫ່ງຄວາມຍຸດຕິທຳ
ຫ້ອຍຢູ່ເໜືອຫົວຂອງພວກທ່ານ; ແທ້ຈິງ
ແລ້ວ, ມັນຈະຟັນລົງໃສ່ພວກທ່ານ ແລະ
ມາຢ້ຽມຢາມພວກທ່ານຈົນເຖິງຄວາມ
ພິນາດ.
30 ຈົ່ງເບິ່ງ, ຂ້າພະເຈົ້າຍັງລໍຖ້າຄວາມ
ຊ່ວຍເຫລືອຈາກພວກທ່ານຢູ່; ແລະ ຖ້າ
ຫາກພວກທ່ານບໍ່ໃຫ້ຄວາມຊ່ວຍເຫລືອແກ່
ພວກເຮົາ, ຈົ່ງເບິ່ງ, ຂ້າພະເຈົ້າຈະມາຫາ
ພວກທ່ານທີ່ແຜ່ນດິນເຊຣາເຮັມລາ, ແລະ
ຈະຟັນພວກທ່ານດ້ວຍດາບ, ເຖິງຂະໜາດ
ທີ່ພວກທ່ານບໍ່ມີອຳນາດທີ່ຈະຂັດຂວາງ
ຄວາມກ້າວໜ້າຂອງຜູ້ຄົນພວກນີ້ໃນອຸດົມ
ການແຫ່ງອິດສະລະພາບຂອງພວກເຮົາ
ໄດ້ອີກຕໍ່ໄປ.
31 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າຈະບໍ່
ປ່ອຍໃຫ້ພວກທ່ານມີຊີວິດຢູ່ ແລະ ກ້າວ
ໜ້າໃນຄວາມຊົ່ວຮ້າຍຫລາຍຂຶ້ນເພື່ອທຳ
ລາຍຜູ້ຄົນທີ່ຊອບທຳຂອງພຣະອົງ.
32 ຈົ່ງເບິ່ງ, ພວກທ່ານຄິດບໍວ່າ ພຣະຜູ້
ເປັນເຈົ້າຈະໄວ້ຊີວິດພວກທ່ານ ແລະ ສະ
ເດັດມາລົງໂທດຊາວເລມັນ, ຍ້ອນວ່າຮີດ
ຄອງປະເພນີຂອງບັນພະບຸລຸດຂອງພວກ
ເຂົາທີ່ເຮັດໃຫ້ພວກເຂົາເປັນໜ້າກຽດຊັງ,

25 *ກ* ແອວ 51:6; 61:15.
28 *ກ* ກຈກ 5:26–29.
29 *ກ* ຣລມ 13:5;
3 ນຟ 2:19.

ແທ້ຈິງແລ້ວ, ແລະ ຄວາມໜ້າກຽດຊັງນີ້ໄດ້
ເພີ່ມທະວີຂຶ້ນໂດຍຜູ້ທີ່ແຍກອອກໄປຈາກ
ພວກເຮົາ, ແລະ ໃນຂະນະທີ່ຄວາມຊົ່ວ
ຮ້າຍຂອງພວກທ່ານເປັນເຫດຂອງຄວາມ
ຮັກຂອງພວກທ່ານນຳຄວາມສັນລະເສີນ
ແລະ ສິ່ງທີ່ບໍ່ມີປະໂຫຍດຂອງໂລກ?
33 ພວກທ່ານຮູ້ຈັກແລ້ວວ່າ ພວກທ່ານ
ລະເມີດກົດຂອງພຣະເຈົ້າ, ແລະ ພວກ
ທ່ານຮູ້ຈັກແລ້ວວ່າ ພວກທ່ານໄດ້ຢຽບຢ່ຳ
ມັນໄວ້ໃຕ້ຕີນຂອງພວກທ່ານ. ຈົ່ງເບິ່ງ,
ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າ
ວ່າ: ຖ້າຫາກຜູ້ທີ່ເຈົ້າໄດ້ເລືອກໃຫ້ເປັນຜູ້
ປົກຄອງຂອງເຈົ້າບໍ່ກັບໃຈຈາກບາບ ແລະ
ຈາກຄວາມຊົ່ວຮ້າຍຂອງພວກເຂົາແລ້ວ,
ເຈົ້າຈົ່ງຂຶ້ນໄປສູ້ຮົບກັບພວກເຂົາ.
34 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າໂມ
ໂຣໄນມີຄວາມຕັ້ງໃຈທີ່ຈະເຮັດຕາມພັນທະ
ສັນຍາ ຊຶ່ງຂ້າພະເຈົ້າໄດ້ເຮັດໄວ້ ເພື່ອຮັກ
ສາພຣະບັນຍັດຂອງພຣະເຈົ້າຂອງຂ້າພະ
ເຈົ້າ; ສະນັ້ນ ຂ້າພະເຈົ້າຢາກໃຫ້ພວກທ່ານ
ຍຶດໝັ້ນຢູ່ໃນພຣະຄຳຂອງພຣະເຈົ້າ, ແລະ
ສົ່ງສະບຽງອາຫານກັບຄົນຂອງພວກທ່ານ
ມາໃຫ້ຂ້າພະເຈົ້າ, ແລະ ຮີບລາມັນນຳອີກ
ໂດຍໄວທີ່ສຸດ.
35 ແລະ ຈົ່ງເບິ່ງ, ຖ້າຫາກພວກທ່ານ
ບໍ່ເຮັດຕາມນີ້ ຂ້າພະເຈົ້າຈະມາຫາພວກ
ທ່ານຢ່າງໄວ; ເພາະຈົ່ງເບິ່ງ, ພຣະເຈົ້າຈະ
ບໍ່ຍອມໃຫ້ພວກເຮົາຕາຍຍ້ອນຄວາມອຶດ
ຫິວ; ສະນັ້ນ, ພຣະອົງຈະມອບອາຫານ
ຂອງພວກທ່ານໃຫ້ແກ່ພວກເຮົາ, ເຖິງແມ່ນ
ຈະເປັນໄປດ້ວຍດາບກໍຕາມ. ບັດນີ້ຈົ່ງເບິ່ງ
ວ່າພວກທ່ານເຮັດໃຫ້ພຣະຄຳຂອງພຣະ
ເຈົ້າສຳເລັດ.
36 ຈົ່ງເບິ່ງ, ຂ້າພະເຈົ້າໂມໂຣໄນຫົວໜ້າ
ນາຍທະຫານຂອງພວກທ່ານ. ຂ້າພະເຈົ້າ
ບໍ່ໄດ້ [ກ]ສະແຫວງຫາອຳນາດ, ແຕ່ຈະດຶງ
ມັນລົງມາ. ຂ້າພະເຈົ້າບໍ່ໄດ້ສະແຫວງຫາ
ກຽດຕິຍົດຂອງໂລກ, ແຕ່ເພື່ອລັດສະໝີ
ພາບຂອງພຣະເຈົ້າຂອງຂ້າພະເຈົ້າ, ແລະ
ອິດສະລະພາບ ແລະ ຄວາມຜາສຸກຂອງ
ປະເທດຊາດຂອງຂ້າພະເຈົ້າ. ແລະ ຂ້າພະ
ເຈົ້າຂໍຈົບສານຂອງຂ້າພະເຈົ້າໄວ້ພຽງເທົ່າ
ນີ້.

## ບົດທີ 61

*ເພໂຣຣັນບອກໂມໂຣໄນເຖິງການຕໍ່ຕ້ານ ແລະ ການກະບົດຕໍ່ຝ່າຍຜູ້ປົກຄອງ—ກຸ່ມນິຍົມກະສັດຍຶດເອົາເມືອງເຊຣາເຮັມລາໄປ ແລະ ສ້າງມິດຕະພາບກັບຊາວເລມັນ—ເພໂຣຣັນຮ້ອງຂໍຄວາມຊ່ວຍເຫລືອທາງທະຫານເພື່ອຈະໄດ້ຕໍ່ສູ້ກັບພວກກະບົດ. ປະມານ 62 ປີ ກ່ອນ ຄ.ສ.*

1 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ບໍ່ດົນຫລັງຈາກທີ່ໂມໂຣໄນສົ່ງສານຂອງ
ເພິ່ນໄປຫາຫົວໜ້າຜູ້ປົກຄອງ, ແລ້ວເພິ່ນກໍ
ໄດ້ຮັບສານຈາກ [ກ]ເພໂຣຣັນຫົວໜ້າຜູ້ປົກ
ຄອງ ແລະ ນີ້ຄືເນື້ອຄວາມທີ່ເພິ່ນໄດ້ຮັບ:
2 ຂ້າພະເຈົ້າເພໂຣຣັນຜູ້ເປັນຫົວໜ້າຜູ້
ປົກຄອງແຜ່ນດິນ, ໄດ້ສົ່ງຂໍ້ຄວາມເຫລົ່າ
ນີ້ມາຫາໂມໂຣໄນ, ຫົວໜ້ານາຍທະຫານ
ຂອງກອງທັບ. ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບທ່ານໂມໂຣໄນວ່າຂ້າພະເຈົ້າບໍ່ໄດ້ຊື່ນ
ຊົມໃນ [ກ]ຄວາມທຸກຂອງທ່ານເລີຍ, ແທ້ຈິງ
ແລ້ວ, ມັນເຮັດໃຫ້ຈິດວິນຍານຂອງຂ້າພະ
ເຈົ້າໂສກເສົ້າຫລາຍ.
3 ແຕ່ຈົ່ງເບິ່ງ, ມັນມີບາງຄົນທີ່ຊື່ນຊົມໃນ
ຄວາມທຸກຂອງທ່ານ, ແທ້ຈິງແລ້ວ, ເຖິງຂະ

36 *ກ* ຄພ 121:39–42.
**61** 1 *ກ* ແອວ 50:39–40.
2 *ກ* ແອວ 60:3–9.

ໜາດທີ່ພວກເຂົາໄດ້ລຸກຂຶ້ນໃນການກະບົດ
ຕໍ່ຂ້າພະເຈົ້າ, ແລະ ຕໍ່ຜູ້ຄົນຂອງຂ້າພະເຈົ້າ
ຜູ້ເປັນ ᵏກຸ່ມອິດສະລະ, ແທ້ຈິງແລ້ວ, ມັນມີ
ຄົນຫລວງຫລາຍທີ່ລຸກຂຶ້ນກະບົດ.
4 ແລະ ມັນ ແມ່ນຜູ້ທີ່ພະຍາຍາມຈະ
ເອົາບັນລັງຕັດສິນໄປຈາກຂ້າພະເຈົ້າ ທີ່
ເປັນສາເຫດໃຫ້ຄວາມຊົ່ວຮ້າຍອັນໃຫຍ່
ຫລວງນີ້ເກີດຂຶ້ນ; ເພາະວ່າພວກເຂົາໃຊ້
ຄຳຍົກຍ້ອງ ແລະ ຊັກຈູງໃຈຂອງຜູ້ຄົນເປັນ
ຈຳນວນຫລວງຫລາຍໄປນຳ, ຊຶ່ງໄດ້ເປັນ
ສາເຫດໃຫ້ມີຄວາມທຸກຢ່າງສາຫັດເກີດ
ຂຶ້ນໃນບັນດາພວກເຮົາ; ພວກເຂົາກໍໄດ້ກັກ
ສະບຽງອາຫານຂອງພວກເຮົາໄວ້, ແລະ
ໄດ້ຂົ່ມຂູ່ກຸ່ມອິດສະລະຈົນວ່າພວກເຂົາບໍ່
ກ້າມາຫາທ່ານ.
5 ແລະ ຈົ່ງເບິ່ງ, ພວກເຂົາໄດ້ໄລ່ຂ້າພະ
ເຈົ້າອອກຈາກບັນລັງຕັດສິນ, ແລະ ຂ້າພະ
ເຈົ້າໄດ້ໜີໄປຫາແຜ່ນດິນກີເດໂອນພ້ອມ
ດ້ວຍຄົນຈຳນວນໜຶ່ງ ເທົ່າທີ່ຂ້າພະເຈົ້າຈະ
ຫາໄດ້.
6 ແລະ ຈົ່ງເບິ່ງ, ຂ້າພະເຈົ້າໄດ້ສົ່ງໃບປະ
ກາດໄປທົ່ວແຜ່ນດິນພາກນີ້; ແລະ ຈົ່ງເບິ່ງ,
ພວກເຂົາກຳລັງພາກັນມາຫາພວກເຮົາແຕ່
ລະມື້, ແລະ ຮັບເອົາອາວຸດເພື່ອປ້ອງກັນ
ປະເທດຊາດຂອງພວກເຂົາ ແລະ ᵏອິດສະ
ລະພາບຂອງພວກເຂົາ ແລະ ເພື່ອຕໍ່ສູ້ກັບ
ຄວາມບໍ່ຖືກຕ້ອງທີ່ພວກເຂົາໄດ້ຮັບມາ.
7 ແລະ ພວກເຂົາໄດ້ມາຫາພວກເຮົາ,
ເຖິງຂະໜາດທີ່ພວກທີ່ລຸກຂຶ້ນໃນການກະ
ບົດຕໍ່ພວກເຮົາຕ້ອງຢຸດສະຫງັກໃນການຕໍ່
ຕ້ານ, ແທ້ຈິງແລ້ວ, ເຖິງຂະໜາດທີ່ພວກ
ເຂົາມີຄວາມຢ້ານກົວພວກເຮົາ ແລະ ບໍ່ກ້າ
ອອກມາສູ້ຮົບກັບພວກເຮົາ.
8 ພວກເຂົາໄດ້ເຂົ້າໄປຄອບຄອງແຜ່ນ
ດິນ ຫລື ເມືອງເຊຣາເຮັມລາ; ພວກເຂົາໄດ້
ສະຖາປະນາໃຫ້ມີກະສັດຂຶ້ນປົກຄອງພວກ
ເຂົາເອງ, ແລະ ກະສັດໄດ້ຂຽນຈົດໝາຍ
ໄປຫາກະສັດຊາວເລມັນ, ຊຶ່ງໃນນັ້ນໄດ້ສັນ
ຍາຮ່ວມສຳພັນທະໄມຕີກັບຊາວເລມັນ; ຊຶ່ງ
ໃນຄຳສັນຍາສຳພັນທະໄມຕີນັ້ນ ລາວຕົກ
ລົງວ່າຈະຮັກສາເມືອງເຊຣາເຮັມລາໄວ້,
ລາວຄິດວ່າ ການຮັກສານັ້ນ ຈະເຮັດໃຫ້
ຊາວເລມັນສາມາດຍຶດເອົາແຜ່ນດິນຕ່າງໆ
ທີ່ຍັງເຫລືອຢູ່, ແລະ ເມື່ອພວກເຂົາໄດ້ເປັນ
ຫົວເມືອງຂຶ້ນຂອງຊາວເລມັນແລ້ວ, ລາວ
ເອງຈະໄດ້ເປັນກະສັດປົກຄອງຜູ້ຄົນພວກ
ນີ້.
9 ແລະ ບັດນີ້, ໃນສານຂອງທ່ານນັ້ນ
ທ່ານຕຳນິຂ້າພະເຈົ້າ, ແຕ່ກໍບໍ່ເປັນຫຍັງ;
ຂ້າພະເຈົ້າບໍ່ໃຈຮ້າຍເລີຍ, ແຕ່ໄດ້ປິຕິຍິນ
ດີໃນນ້ຳໃຈອັນປະເສີດຂອງທ່ານ. ຂ້າພະ
ເຈົ້າເພໂຣຣັນບໍ່ໄດ້ສະແຫວງຫາອຳນາດ
ອັນໃດເລີຍນອກຈາກບັນລັງຕັດສິນ ເພື່ອ
ຂ້າພະເຈົ້າຈະໄດ້ຮັກສາຄວາມຍຸດຕິທຳ
ແລະ ເສລີພາບຂອງຜູ້ຄົນຂອງຂ້າພະເຈົ້າ
ໄວ້ເທົ່ານັ້ນ. ຈິດວິນຍານຂອງຂ້າພະເຈົ້າ
ໝັ້ນຄົງຢູ່ໃນເສລີພາບສະເໝີມາ ຊຶ່ງໃນ
ນັ້ນພຣະເຈົ້າໄດ້ເຮັດໃຫ້ພວກເຮົາເປັນ
ᵏອິດສະລະ.
10 ແລະ ບັດນີ້, ຈົ່ງເບິ່ງພວກເຮົາຈະ
ຕໍ່ຕ້ານຄວາມຊົ່ວຮ້າຍຈົນເຖິງການນອງ
ເລືອດ. ພວກເຮົາຈະບໍ່ເຮັດໃຫ້ຊາວເລມັນ
ເສຍເລືອດເນື້ອເລີຍ ຖ້າຫາກພວກເຂົາຢູ່
ໃນແຜ່ນດິນຂອງພວກເຂົາເອງ.
11 ພວກເຮົາຈະບໍ່ເຮັດໃຫ້ພີ່ນ້ອງຂອງ
ພວກເຮົາຕ້ອງເສຍເລືອດເນື້ອເລີຍ ຖ້າ
ຫາກພວກເຂົາບໍ່ລຸກຂຶ້ນໃນການກະບົດ
ແລະ ຈັບດາບຂຶ້ນຕໍ່ສູ້ກັບພວກເຮົາ.

3 *ກ* ແອວ 51:6–7.
6 *ກ* ຄມພ ເສລີພາບ;
ອິດສະລະ, ອິດສະລະພາບ.
9 *ກ* ຢຮ 8:31–36;
ຄພ 88:86.

12 ພວກເຮົາຈະຍອມຕົວຂຶ້ນຢູ່ກັບແອກ
ແຫ່ງຄວາມເປັນທາດ ຖ້າຫາກມັນເປັນສິ່ງ
ຈຳເປັນກັບຄວາມຍຸດຕິທຳຂອງພຣະເຈົ້າ,
ຫລື ຖ້າຫາກພຣະອົງຈະບັນຊາພວກເຮົາ
ໃຫ້ເຮັດເຊັ່ນນີ້.
13 ແຕ່ຈົ່ງເບິ່ງ ພຣະອົງບໍ່ໄດ້ບັນຊາພວກ
ເຮົາໃຫ້ຍອມຕົວຂຶ້ນຢູ່ກັບສັດຕູຂອງພວກ
ເຮົາເລີຍ, ແຕ່ໃຫ້ພວກເຮົາ [ກ]ໄວ້ວາງໃຈໃນ
ພຣະອົງ, ແລະ ພຣະອົງຈະປົດປ່ອຍພວກ
ເຮົາ.
14 ສະນັ້ນ, ໂມໂຣໄນ ອ້າຍນ້ອງທີ່ຮັກ
ແພງຂອງຂ້າພະເຈົ້າ, ຂໍໃຫ້ພວກເຮົາຈົ່ງຕໍ່
ຕ້ານຄວາມຊົ່ວ ແລະ ຄວາມຊົ່ວໃດກໍຕາມ
ທີ່ພວກເຮົາບໍ່ອາດ [ກ]ຕ້ານທານໄດ້ດ້ວຍຄຳ
ເວົ້າຂອງພວກເຮົາ, ແທ້ຈິງແລ້ວ, ເຊັ່ນດຽວ
ກັບການກະບົດ ແລະ ການແຕກແຍກນັ້ນ,
ຂໍໃຫ້ພວກເຮົາຈົ່ງຕໍ່ຕ້ານມັນດ້ວຍດາບ
ຂອງພວກເຮົາ, ເພື່ອພວກເຮົາຈະໄດ້ຮັກ
ສາອິດສະລະພາບຂອງພວກເຮົາໄວ້, ເພື່ອ
ພວກເຮົາຈະໄດ້ປິຕິຍິນດີໃນສິດທິອັນຍິ່ງ
ໃຫຍ່ຂອງສາດສະໜາຈັກຂອງພວກເຮົາ,
ແລະ ໃນອຸດົມການຂອງພຣະຜູ້ໄຖ່ ແລະ
ພຣະເຈົ້າຂອງພວກເຮົາ.
15 ສະນັ້ນ, ຂໍໃຫ້ທ່ານມາຫາຂ້າພະເຈົ້າ
ໂດຍໄວ, ພ້ອມດ້ວຍຄົນຂອງທ່ານຈຳນວນ
ໜຶ່ງ, ແລະ ໃຫ້ຄົນທີ່ເຫລືອຢູ່ນັ້ນຢູ່ໃຕ້ບັງ
ຄັບບັນຊາກອງທັບຂອງລີໄຮ ແລະ ຂອງ
ທີອານຄຳ; ໃຫ້ເຂົາເຈົ້າມີອຳນາດທີ່ຈະດຳ
ເນີນສົງຄາມໃນແຜ່ນດິນສ່ວນນັ້ນຕາມ
[ກ]ພຣະວິນຍານຂອງພຣະເຈົ້າ, ຊຶ່ງເປັນ
ພຣະວິນຍານແຫ່ງອິດສະລະພາບທີ່ມີຢູ່
ກັບເຂົາເຈົ້າ.
16 ຈົ່ງເບິ່ງ ຂ້າພະເຈົ້າໄດ້ສົ່ງສະບຽງ
ອາຫານເລັກໜ້ອຍມາໃຫ້ພວກເຂົາ, ເພື່ອ
ພວກເຂົາຈະບໍ່ໄດ້ຫິວຕາຍ ຈົນກວ່າທ່ານ
ຈະມາເຖິງຂ້າພະເຈົ້າ.
17 ຈົ່ງເຕົ້າໂຮມກຳລັງທະຫານເທົ່າທີ່
ທ່ານສາມາດເຮັດໄດ້ ແລະ ໃຫ້ເດີນທັບມາ
ທີ່ນີ້, ແລະ ພວກເຮົາຈະໄປຕໍ່ສູ້ທັນທີກັບ
ພວກທີ່ແຕກແຍກອອກໄປ ດ້ວຍພະລັງ
ຂອງພຣະເຈົ້າຂອງພວກເຮົາຕາມສັດທາທີ່
ພວກເຮົາມີ.
18 ແລະ ພວກເຮົາຈະຍຶດເອົາເມືອງ
ເຊຣາເຮັມລານັ້ນຄືນມາ, ເພື່ອພວກເຮົາ
ຈະໄດ້ມີອາຫານເພີ່ມຂຶ້ນ ເພື່ອສົ່ງໄປໃຫ້
ລີໄຮ ແລະ ທີອານຄຳ; ແທ້ຈິງແລ້ວ, ພວກ
ເຮົາຈະອອກໄປຕໍ່ສູ້ກັບພວກເຂົາດ້ວຍພະ
ລັງຂອງພຣະຜູ້ເປັນເຈົ້າ, ແລະ ພວກເຮົາ
ຈະເຮັດໃຫ້ຄວາມຊົ່ວຮ້າຍອັນໃຫຍ່ຫລວງ
ນີ້ສິ້ນສຸດລົງ.
19 ແລະ ບັດນີ້, ໂມໂຣໄນ, ຂ້າພະເຈົ້າດີ
ໃຈຫລາຍທີ່ໄດ້ຮັບສານຂອງທ່ານ, ເພາະ
ວ່າຂ້າພະເຈົ້າກຳລັງກຸ້ມໃຈຫລາຍບໍ່ຮູ້ວ່າ
ຈະເຮັດແນວໃດດີ, ວ່າມັນເປັນການຖືກ
ຕ້ອງຫລືບໍ່ທີ່ພວກເຮົາຈະອອກໄປສູ້ຮົບກັບ
ພີ່ນ້ອງຂອງພວກເຮົາເອງ.
20 ແຕ່ທ່ານໄດ້ເວົ້າວ່າ ຖ້າຫາກພວກ
ເຂົາບໍ່ກັບໃຈ ພຣະຜູ້ເປັນເຈົ້າໄດ້ບັນຊາໃຫ້
ທ່ານໄປສູ້ຮົບກັບພວກເຂົາ.
21 ຈົ່ງຊ່ວຍໃຫ້ລີໄຮ ແລະ ທີອານຄຳ
[ກ]ເຂັ້ມແຂງຂຶ້ນໃນພຣະຜູ້ເປັນເຈົ້າ; ຈົ່ງບອກ
ເຂົາເຈົ້າບໍ່ໃຫ້ຢ້ານກົວ, ເພາະວ່າພຣະເຈົ້າ
ຈະປົດປ່ອຍເຂົາເຈົ້າ, ແທ້ຈິງແລ້ວ, ພ້ອມ
ທັງທຸກຄົນທີ່ໝັ້ນຄົງຢູ່ໃນເສລີພາບ ຊຶ່ງ
ພຣະເຈົ້າເຮັດໃຫ້ພວກເຂົາເປັນອິດສະລະ.
ແລະ ບັດນີ້ຂ້າພະເຈົ້າຂໍຈົບສານຂອງຂ້າ
ພະເຈົ້າຫາໂມໂຣໄນອ້າຍນ້ອງທີ່ຮັກແພງ
ຂອງຂ້າພະເຈົ້າພຽງເທົ່ານີ້.

13 *ກ* ຄມພ ສັດທາ; ໄວ້ວາງໃຈ, ຄວາມໄວ້ວາງໃຈ.
14 *ກ* ແອວ 43:47.
15 *ກ* 2 ກຣທ 3:17. ຄມພ ພຣະວິນຍານບໍລິສຸດ.
21 *ກ* ຊກຍ 10:12.

## ບົດທີ 62

*ໂມໂຣໄນເດີນທັບໄປຊ່ວຍເພໂຮຣັນໃນແຜ່ນດິນກີເດໂອນ—ກຸ່ມນິຍົມກະສັດຜູ້ປະຕິເສດບໍ່ປ້ອງກັນປະເທດຊາດຖືກປະຫານຊີວິດ—ເພໂຮຣັນ ແລະ ໂມໂຣໄນໄດ້ຍຶດເອົາເມືອງນີໄຟຮາຄືນມາ—ຊາວເລມັນຢ່າງຫລວງຫລາຍເຂົ້າຮ່ວມກັບຜູ້ຄົນຂອງອຳໂມນ—ທີອານຄຳຂ້າອາມໂມຣອນ ແລະ ລາວກໍຖືກຂ້າຕາຍຄືກັນ—ຊາວເລມັນຖືກຂັບໄລ່ອອກຈາກແຜ່ນດິນໄປ, ແລະ ສັນຕິພາບໄດ້ຖືກສະຖາປະນາຂຶ້ນ—ຮີລາມັນກັບຄືນມາປະຕິບັດສາດສະໜາກິດຄືເກົ່າ ແລະ ຈັດຕັ້ງສາດສະໜາຈັກຂຶ້ນ. ປະມານ 62–57 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອໂມໂຣໄນໄດ້ຮັບສານນີ້ ໃຈຂອງ
ເພິ່ນໄດ້ຮັບພະລັງຂຶ້ນ, ແລະ ເຕັມໄປດ້ວຍ
ຄວາມຊື່ນຊົມຢ່າງລົ້ນເຫລືອ ຍ້ອນຄວາມ
ຊື່ສັດຂອງເພໂຮຣັນ, ຄືເພິ່ນເອງບໍ່ໄດ້ເປັນ
[ກ]ຄົນທໍລະຍົດຕໍ່ອິດສະລະພາບ ແລະ ຕໍ່
ປະເທດຊາດຂອງເພິ່ນ.
2 ແຕ່ເພິ່ນກໍເປັນທຸກຫລາຍທີ່ສຸດຄືກັນ
ເພາະຄວາມຊົ່ວຮ້າຍຂອງພວກທີ່ຂັບໄລ່
ເພໂຮຣັນອອກຈາກບັນລັງຕັດສິນ, ແທ້ຈິງ
ແລ້ວ, ໂດຍສະຫລຸບ ເພາະມັນມີພວກທີ່
ກະບົດຕໍ່ປະເທດຊາດ ແລະ ຕໍ່ພຣະເຈົ້າ
ຂອງພວກເຂົານຳອີກ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ເອົາຄົນຈຳນວນໜຶ່ງມານຳຕາມ
ຄວາມປາດຖະໜາຂອງເພໂຮຣັນ, ແລະ
ມອບອຳນາດໃຫ້ລີໄຮ ແລະ ທີອານຄຳບັງ
ຄັບບັນຊາກອງທະຫານທີ່ເຫລືອຢູ່ຂອງ
ເພິ່ນ, ແລະ ເພິ່ນໄດ້ເດີນທັບໄປຫາແຜ່ນ
ດິນກີເດໂອນ.
4 ແລະ ເພິ່ນໄດ້ຍົກ [ກ]ທຸງແຫ່ງ [ຂ]ເສລີພາບ
ຂຶ້ນໃນທຸກບ່ອນທີ່ເພິ່ນເຂົ້າໄປເຖິງ, ແລະ
ໄດ້ຮັບກຳລັງເພີ່ມຂຶ້ນເທົ່າທີ່ຈະຫາໄດ້ ໃນ
ລະຫວ່າງການເດີນທັບຂອງເພິ່ນໄປຫາ
ແຜ່ນດິນກີເດໂອນນັ້ນ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີຜູ້
ຄົນຫລາຍພັນຄົນທີ່ໄດ້ພາກັນມາເຂົ້າຮ່ວມ
ກອງທັບຂອງເພິ່ນ, ແລະ ໄດ້ຈັບດາບຂຶ້ນ
ເພື່ອປ້ອງກັນອິດສະລະພາບ, ເພື່ອພວກ
ເຂົາຈະບໍ່ໄດ້ຕົກໄປສູ່ຄວາມເປັນທາດ.
6 ແລະ ເວລາໂມໂຣໄນໄດ້ເຕົ້າໂຮມກຳ
ລັງຄົນເທົ່າທີ່ຈະເຮັດໄດ້ໃນລະຫວ່າງການ
ເດີນທັບຂອງເພິ່ນແລ້ວ, ເພິ່ນກໍມາຮອດ
ແຜ່ນດິນກີເດໂອນ, ແລະ ໄດ້ຮ່ວມກຳລັງ
ຂອງເພິ່ນເຂົ້າກັບກຳລັງຂອງເພໂຮຣັນ,
ແມ່ນແຕ່ມີກຳລັງຫລາຍກວ່າກຳລັງຄົນ
ຂອງເພຄັດ, ຜູ້ທີ່ເປັນ [ກ]ກະສັດຂອງພວກທີ່
ແຍກອອກໄປ ຜູ້ຊຶ່ງໄດ້ຂັບໄລ່ [ຂ]ກຸ່ມອິດສະ
ລະອອກຈາກແຜ່ນດິນເຊຣາເຮັມລາໄປ
ແລະ ໄດ້ເຂົ້າເປັນເຈົ້າຂອງແຜ່ນດິນນັ້ນ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນ ແລະ ເພໂຮຣັນໄດ້ລົງໄປພ້ອມດ້ວຍ
ກອງທັບຂອງພວກເພິ່ນ ເພື່ອເຂົ້າໄປໂຈມ
ຕີແຜ່ນດິນເຊຣາເຮັມລາ, ແລະ ພວກເພິ່ນ
ໄດ້ພົບກັບທະຫານຂອງເພຄັດ, ເຖິງຂະ
ໜາດທີ່ທັງສອງຝ່າຍໄດ້ເຂົ້າສູ້ຮົບກັນ.
8 ແລະ ຈົ່ງເບິ່ງ, ເພຄັດໄດ້ຖືກຂ້າຕາຍ
ແລະ ທະຫານຂອງລາວຖືກຈັບໄປເປັນຊະ
ເລີຍເສິກ, ແລະ ເພໂຮຣັນກໍໄດ້ກັບຄືນສູ່
ບັນລັງຕັດສິນຂອງເພິ່ນເໝືອນເດີມ.
9 ແລະ ຄົນຂອງເພຄັດໄດ້ຮັບການພິ
ຈາລະນາຄະດີຕາມກົດໝາຍ, ແລະ ກຸ່ມ
ນິຍົມກະສັດກໍໄດ້ຖືກຈັບ ແລະ ເອົາເຂົ້າ

---

**62** 1*ກ* ແອວ 60:18.
4*ກ* ແອວ 46:12–13, 36.
ຄມພ ປ້າຍສັນຍານ.
*ຂ* ຄມພ ເສລີພາບ.
6*ກ* ແອວ 61:4–8.
*ຂ* ແອວ 51:5–7.

ຄຸກ; ແລະ ພວກເຂົາຖືກ [a]ຕັດສິນຕາມກົດ
ໝາຍ; ແທ້ຈິງແລ້ວ, ຖ້າຜູ້ໃດກໍຕາມທີ່ເປັນ
ທະຫານຂອງເພຄັດ ແລະ ເປັນກຸ່ມນິຍົມ
ກະສັດທີ່ຂັດຂວາງ ແລະ ບໍ່ຍອມຈັບອາວຸດ
ຂຶ້ນເພື່ອປ້ອງກັນປະເທດຊາດຂອງຕົນ, ຜູ້
ນັ້ນກໍຕ້ອງໄດ້ຖືກປະຫານຊີວິດ.
10 ແລະ ມັນຈຶ່ງເປັນການສົມຄວນທີ່ກົດ
ໝາຍນີ້ຈະໄດ້ຮັບການປະຕິບັດຢ່າງເຄັ່ງ
ຄັດ ເພື່ອຄວາມປອດໄພຂອງປະເທດຊາດ
ຂອງພວກເຂົາ; ແທ້ຈິງແລ້ວ, ແລະ ຜູ້ໃດກໍ
ຕາມທີ່ຖືກພົບວ່າປະຕິເສດອິດສະລະພາບ
ຍ່ອມຖືກປະຫານຊີວິດຕາມກົດໝາຍໂດຍ
ທັນທີ.
11 ແລະ ປີທີສາມສິບແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້; ໂມໂຣໄນກັບເພໂຣຣັນໄດ້ນຳ
ສັນຕິສຸກຄືນມາໃຫ້ແຜ່ນດິນເຊຣາເຮັມລາ,
ໃນບັນດາຜູ້ຄົນຂອງພວກເພິ່ນ, ໂດຍໄດ້
ປະຫານຊີວິດທຸກຄົນທີ່ບໍ່ຊື່ສັດຕໍ່ອຸດົມການ
ແຫ່ງອິດສະລະພາບ.
12 ແລະ ເຫດການໄດ້ບັງເກີດຂຶ້ນໃນຕົ້ນ
ປີທີສາມສິບເອັດແຫ່ງການປົກຄອງຂອງຜູ້
ຕັດສິນດູແລຜູ້ຄົນຂອງນີໄຟ, ໂມໂຣໄນໄດ້
ສັ່ງໃຫ້ສົ່ງສະບຽງອາຫານ ແລະ ກອງທັບທີ່
ມີກຳລັງຄົນຫົກພັນຄົນໄປໃຫ້ຮີລາມັນໂດຍ
ທັນທີ, ເພື່ອຊ່ວຍເຫລືອເພິ່ນໃນການປ້ອງ
ກັນແຜ່ນດິນພາກນັ້ນ.
13 ແລະ ເພິ່ນກໍໄດ້ສົ່ງກອງທັບທີ່ມີກຳ
ລັງຄົນຫົກພັນຄົນພ້ອມດ້ວຍອາຫານເປັນ
ຈຳນວນພຽງພໍໄປໃຫ້ກອງທັບຂອງລີໄຮ
ແລະ ທີອານຄຳນຳອີກ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ສິ່ງນີ້ກະທຳໄປເພື່ອເສີມ
ກຳລັງແຜ່ນດິນ ເພື່ອຈະໄດ້ຕ້ານທານຊາວ
ເລມັນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນກັບເພໂຣຣັນ ໂດຍທີ່ໄດ້ປະກອງ
ທະຫານໄວ້ໃນແຜ່ນດິນເຊຣາເຮັມລາເປັນ
ຈຳນວນຫລວງຫລາຍ, ແລ້ວທັງສອງກໍ
ໄດ້ອອກເດີນທັບໄປພ້ອມດ້ວຍທະຫານ
ຈຳນວນຫລວງຫລາຍ ມຸ້ງໜ້າໄປຫາແຜ່ນ
ດິນນີໄຟຮາ, ໂດຍຕັ້ງໃຈຈະເອົາຊະນະ
ຊາວເລມັນຜູ້ທີ່ຢູ່ໃນເມືອງນັ້ນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ພວກເພິ່ນເດີນທັບມຸ້ງໜ້າໄປຫາ
ແຜ່ນດິນນັ້ນ, ເຂົາເຈົ້າໄດ້ພົບກັບຊາວ
ເລມັນຈຳນວນຫລວງຫລາຍ, ແລະ ໄດ້ຂ້າ
ພວກເຂົາຢ່າງຫລວງຫລາຍ, ແລະ ໄດ້ຍຶດ
ເອົາສະບຽງອາຫານ ແລະ ອາວຸດແຫ່ງສົງ
ຄາມຂອງພວກເຂົາ.
16 ແລະ ເຫດການໄດ້ບັງເກີດຂຶ້ນຫລັງ
ຈາກພວກເພິ່ນໄດ້ຈັບພວກເຂົາໄວ້ແລ້ວ,
ພວກເພິ່ນໄດ້ໃຫ້ພວກເຂົາເຂົ້າເຮັດພັນທະ
ສັນຍາວ່າ ພວກເຂົາຈະບໍ່ຈັບອາວຸດແຫ່ງ
ສົງຄາມຂຶ້ນສູ້ຮົບກັບຊາວນີໄຟອີກຕໍ່ໄປ.
17 ແລະ ເມື່ອພວກເຂົາໄດ້ເຮັດພັນທະ
ສັນຍານີ້ແລ້ວ ພວກເພິ່ນຈຶ່ງໄດ້ສົ່ງພວກ
ເຂົາໄປຢູ່ກັບຜູ້ຄົນຂອງອຳໂມນ, ແລະ
ພວກເຂົາເຫລົ່ານັ້ນມີຈຳນວນປະມານສີ່
ພັນຄົນທີ່ບໍ່ໄດ້ຖືກຂ້າຕາຍ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເພິ່ນໄດ້ສົ່ງພວກເຂົາໄປແລ້ວ ພວກ
ເພິ່ນກໍໄດ້ເດີນທັບໄປຫາແຜ່ນດິນນີໄຟຮາ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ພວກເພິ່ນໄປຮອດເມືອງນີໄຟຮາແລ້ວ,
ພວກເພິ່ນໄດ້ຕັ້ງຄ້າຍຂຶ້ນໃນທົ່ງພຽງທີ່ຢູ່ໃກ້
ກັບເມືອງນີໄຟຮາ.
19 ບັດນີ້ໂມໂຣໄນປາດຖະໜາຈະໃຫ້
ຊາວເລມັນອອກມາສູ້ຮົບກັບພວກຕົນໃນ

9 *a* ຄມພ ໂທດປະຫານຊີວິດ.

ທົ່ງພຽງ; ແຕ່ຊາວເລມັນຮູ້ຈັກເຖິງຄວາມ
ເກັ່ງກ້າທີ່ສຸດຂອງພວກເພິ່ນ, ແລະ ໂດຍ
ທີ່ເຫັນຈຳນວນຄົນຢ່າງຫລວງຫລາຍ,
ສະນັ້ນ ພວກເຂົາຈຶ່ງບໍ່ກ້າອອກມາຕໍ່ສູ້ກັບ
ພວກເພິ່ນ; ສະນັ້ນພວກເຂົາຈຶ່ງບໍ່ອອກມາ
ຕໍ່ສູ້ໃນມື້ນັ້ນ.

20 ແລະ ເມື່ອເຖິງຕອນກາງຄືນ, ໂມໂຣ
ໄນໄດ້ອອກໄປໃນຄວາມມືດ, ແລະ ຂຶ້ນໄປ
ເທິງກຳແພງເພື່ອສອດແນມເບິ່ງວ່າຊາວ
ເລມັນຕັ້ງຄ້າຍຢູ່ກັບກອງທັບຂອງພວກ
ເຂົາຢູ່ບ່ອນໃດຂອງເມືອງ.

21 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ພວກເຂົາຕັ້ງຄ້າຍຢູ່ທາງຕາເວັນອອກໃກ້
ທາງເຂົ້າ; ແລະ ພວກເຂົາທັງໝົດກຳລັງ
ນອນຫລັບຢູ່. ແລະ ບັດນີ້ໂມໂຣໄນໄດ້ກັບ
ຄືນໄປຫາກອງທັບຂອງເພິ່ນ ແລະ ໃຫ້
ພວກເຂົາຕຽມເຊືອກກັບຂັ້ນໄດໂດຍດ່ວນ,
ເພື່ອຈະໄດ້ຢ່ອນລົງໄປຈາກສັນກຳແພງ
ແລະ ເຂົ້າໄປຫາຂ້າງໃນ.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ໃຫ້ທະຫານຂອງເພິ່ນຍົກທັບ
ອອກໄປ ແລະ ຂຶ້ນໄປເທິງກຳແພງ, ແລະ
ຢ່ອນຕົວລົງໄປຫາສ່ວນໜຶ່ງຂອງຕົວເມືອງ,
ແທ້ຈິງແລ້ວ, ລົງໄປທາງຕາເວັນຕົກ, ບ່ອນ
ທີ່ຊາວເລມັນບໍ່ໄດ້ຕັ້ງຄ້າຍຢູ່ກັບກອງທັບ
ຂອງພວກເຂົາ.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຂົາ
ເຈົ້າທັງໝົດໄດ້ຢ່ອນຕົວລົງໄປໃນເມືອງ
ຕອນກາງຄືນໂດຍໃຊ້ເຊືອກທີ່ໝັ້ນໜຽວ
ແລະ ຂັ້ນໄດ; ເມື່ອຮອດຕອນເຊົ້າມາ ເຂົາ
ເຈົ້າທຸກຄົນໄດ້ເຂົ້າມາຢູ່ພາຍໃນກຳແພງ
ເມືອງແລ້ວດັ່ງນັ້ນ.

24 ແລະ ບັດນີ້, ເວລາຊາວເລມັນຕື່ນ
ຂຶ້ນ ແລະ ເຫັນວ່າກອງທັບຂອງໂມໂຣໄນ
ຢູ່ພາຍໃນກຳແພງເມືອງແລ້ວ, ພວກເຂົາ
ກໍຕົກໃຈຢ້ານທີ່ສຸດ, ເຖິງຂະໜາດທີ່ພວກ
ເຂົາໄດ້ພາກັນແລ່ນໜີອອກໄປຕາມທາງ
ເຂົ້າເມືອງນັ້ນ.

25 ແລະ ບັດນີ້ເມື່ອໂມໂຣໄນເຫັນວ່າ
ພວກເຂົາກຳລັງໜີໄປຕໍ່ໜ້າເພິ່ນ, ເພິ່ນກໍ
ໄດ້ສັ່ງໃຫ້ທະຫານຂອງເພິ່ນຍົກອອກໄປຕໍ່
ສູ້ກັບພວກເຂົາ, ແລະ ໄດ້ຂ້າພວກເຂົາຖິ້ມ
ຢ່າງຫລວງຫລາຍ, ແລະ ອ້ອມໄວ້ອີກຢ່າງ
ຫລວງຫລາຍ, ແລະ ຈັບເອົາພວກເຂົາໄປ
ເປັນຊະເລີຍເສິກ; ແລະ ສ່ວນທີ່ເຫລືອຢູ່
ນັ້ນກໍໜີເຂົ້າໄປຫາແຜ່ນດິນໂມໂຣໄນ ຊຶ່ງຢູ່
ຕິດຊາຍແດນໃກ້ຝັ່ງທະເລ.

26 ໂມໂຣໄນກັບເພໂຮຣັນໄດ້ຄອບຄອງ
ເມືອງນີໄຟຮາດັ່ງນີ້ ໂດຍບໍ່ໄດ້ສູນເສຍຈັກ
ຄົນເລີຍ; ແລະ ມີຊາວເລມັນເປັນຈຳນວນ
ຫລວງຫລາຍຖືກຂ້າຕາຍ.

27 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນຜູ້ທີ່ຖືກຈັບເປັນຊະເລີຍຢ່າງຫລວງ
ຫລາຍມີຄວາມປາດຖະໜາທີ່ຈະເຂົ້າຮ່ວມ
ກັບ [ກ]ຜູ້ຄົນຂອງອຳໂມນ ແລະ ກາຍເປັນ
ຄົນທີ່ມີອິດສະລະພາບ.

28 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລາຍຕໍ່ຫລາຍຄົນທີ່ປາດຖະໜາຢາກເຂົ້າ
ຮ່ວມກໍໄດ້ຮັບອະນຸຍາດຕາມຄວາມປາດ
ຖະໜາຂອງພວກເຂົາ.

29 ສະນັ້ນ, ຊະເລີຍເສິກທັງໝົດທີ່ເປັນ
ຊາວເລມັນຈຶ່ງໄດ້ເຂົ້າຮ່ວມກັບຜູ້ຄົນຂອງ
ອຳໂມນ ແລະ ໄດ້ເລີ່ມອອກແຮງຢ່າງດຸ
ໝັ່ນ, ໄດ້ໄຖດິນ, ປູກພືດພັນນາໆຊະນິດ,
ແລະ ລ້ຽງສັດ ລວມທັງຝູງສັດໃຊ້ແຮງງານ
ທຸກຊະນິດ; ດັ່ງນັ້ນ ຊາວນີໄຟຈຶ່ງໄດ້ພົ້ນ
ຈາກພາລະອັນໜັກໜ່ວງໂດຍວິທີນີ້; ແທ້
ຈິງແລ້ວ, ເຖິງຂະໜາດທີ່ພວກເຂົາໄດ້ພົ້ນ

27 *ກ* ຄມພ ອານໄທ-ນີໄຟ-ລີໄຮ.

ຈາກພາລະທີ່ບໍ່ຕ້ອງເຝົ້າຍາມຊະເລີຍເສິກ
ທີ່ເປັນຊາວເລມັນອີກຕໍ່ໄປ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນ, ຫລັງຈາກ ທີ່ເພິ່ນ ໄດ້ຄອບຄອງ
ເມືອງນີໄຟຮາ, ໄດ້ຈັບຊະເລີຍເສິກເປັນ
ຈຳນວນຫລວງຫລາຍໄວ້, ຊຶ່ງໄດ້ເຮັດໃຫ້
ກອງທັບຂອງຊາວເລມັນລົດກຳລັງລົງ
ຫລາຍ, ແລະ ໄດ້ຮັບຊາວນີໄຟຫລາຍຄົນ
ທີ່ຖືກຈັບໄປເປັນຊະເລີຍກັບຄືນມາ, ຊຶ່ງ
ເຮັດໃຫ້ກອງທັບຂອງໂມໂຣໄນມີກຳລັງ
ຫລາຍຂຶ້ນເລື້ອຍໆ; ສະນັ້ນ ໂມໂຣໄນຈຶ່ງ
ໄດ້ນຳກອງທັບຈາກແຜ່ນດິນນີໄຟຮາໄປ
ຫາແຜ່ນດິນລີໄຮ.
31 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຊາວເລມັນເຫັນວ່າໂມໂຣໄນກຳລັງຈະມາ
ໂຈມຕີພວກເຂົາ, ພວກເຂົາຈຶ່ງຕື່ນຕົກໃຈ
ແລະ ໄດ້ປົບໜີໄປຕໍ່ໜ້າກອງທັບຂອງໂມ
ໂຣໄນ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນກັບກອງທັບຂອງເພິ່ນໄດ້ໄລ່ຕາມ
ພວກເຂົາຈາກເມືອງໜຶ່ງໄປຫາອີກເມືອງ
ໜຶ່ງ ຈົນວ່າພວກເຂົາໄດ້ພົບກັບລີໄຮ ແລະ
ທີອານຄຳ; ແລະ ຊາວເລມັນໄດ້ປົບໜີຈາກ
ລີໄຮ ແລະ ທີອານຄຳໄປ, ຈົນລົງໄປຮອດ
ແຜ່ນດິນໂມໂຣໄນ ຊຶ່ງຢູ່ໃນຊາຍແດນໃກ້
ຝັ່ງທະເລ.
33 ແລະ ກອງທັບຂອງຊາວເລມັນໄດ້
ພາກັນມາເຕົ້າໂຮມກັນຢູ່, ເຖິງຂະໜາດທີ່
ພວກເຂົາທັງໝົດເປັນກອງດຽວໃນແຜ່ນ
ດິນໂມໂຣໄນ. ບັດນີ້ອາມໂມຣອນຜູ້ເປັນ
ກະສັດຂອງຊາວເລມັນກໍຢູ່ໃນທີ່ນັ້ນຄືກັນ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນ ແລະ ລີໄຮ ແລະ ທີອານຄຳ ໄດ້ຕັ້ງ
ຄ້າຍຂຶ້ນອ້ອມຮອບຊາຍແດນແຜ່ນດິນໂມ
ໂຣໄນ, ເຖິງຂະໜາດທີ່ຊາວເລມັນໄດ້ຖືກ
ລ້ອມໄວ້ຢູ່ທີ່ຊາຍແດນໃກ້ຖິ່ນແຫ້ງແລ້ງກັນ
ດານທາງໃຕ້, ແລະ ປິດລ້ອມຊາຍແດນ
ໃກ້ກັບຖິ່ນແຫ້ງແລ້ງກັນດານທາງຕາເວັນ
ອອກ.
35 ແລະ ເຂົາເຈົ້າໄດ້ຕັ້ງຄ້າຍຂຶ້ນໃນ
ຕອນຄ່ຳດັ່ງນີ້. ເພາະຈົ່ງເບິ່ງ, ທັງຊາວນີໄຟ
ແລະ ຊາວເລມັນມີຄວາມອິດເມື່ອຍຫລາຍ
ຍ້ອນການເດີນທັບມາເປັນເວລານານ
ແລ້ວ; ສະນັ້ນ ພວກເຂົາຈຶ່ງບໍ່ໄດ້ວາງກົນອຸ
ບາຍແນວໃດໃນຕອນກາງຄືນ, ນອກຈາກ
ທີອານຄຳຄົນດຽວ ເພາະວ່າລາວໄດ້ຄຽດ
ແຄ້ນໃຫ້ອາມໂມຣອນຫລາຍທີ່ສຸດ, ເຖິງ
ຂະໜາດທີ່ລາວເຈາະຈົງໃສ່ວ່າອາມໂມ
ຣອນ ແລະ ອະມາລີໄຄຢາອ້າຍຂອງລາວ
ເປັນ *ກ*ສາເຫດຂອງສົງຄາມທີ່ຍືດເຍື້ອຍາວ
ນານລະຫວ່າງເຂົາເຈົ້າກັບຊາວເລມັນ, ຊຶ່ງ
ເປັນສາເຫດຂອງສົງຄາມ ແລະ ການນອງ
ເລືອດຢ່າງຫລວງຫລາຍ, ແທ້ຈິງແລ້ວ,
ແລະ ການອຶດຢາກຢ່າງຫລວງຫລາຍເຊັ່ນ
ນີ້.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື ທີ
ອານຄຳມີຄວາມຄຽດແຄ້ນຫລາຍ ຈຶ່ງໄດ້
ລອບເຂົ້າໄປໃນຄ້າຍຂອງຊາວເລມັນ,
ແລະ ຢ່ອນຕົວລົງຈາກສັນກຳແພງເມືອງ.
ແລະ ລາວໄດ້ເຂົ້າໄປພ້ອມດ້ວຍເຊືອກ
ຈາກບ່ອນນັ້ນ ຫາບ່ອນນີ້, ຈົນວ່າລາວພົບ
ກະສັດ ແລະ ລາວໄດ້ *ກ*ຊັດຫອກໃສ່ກະສັດ
ຖືກໃກ້ຫົວໃຈ. ແຕ່ຈົ່ງເບິ່ງ, ກະສັດໄດ້ປຸກ
ຂ້າໃຊ້ຂອງຕົນຂຶ້ນກ່ອນຕົວເອງຈະຂາດ
ໃຈຕາຍ, ເຖິງຂະໜາດທີ່ພວກເຂົາໄດ້ໄລ່
ຕາມທີອານຄຳ ແລະ ຂ້າລາວ.
37 ບັດນີ້ ເຫດການໄດ້ບັງເກີດຂຶ້ນຄື
ເວລາລີໄຮ ແລະ ໂມໂຣໄນຮູ້ເຖິງການຕາຍ

35 *ກ* ແອວ 48:1.
36 *ກ* ແອວ 51:33–34.

ຂອງທີອານຄຳ, ພວກເພິ່ນກໍເສົ້າສະຫລົດ
ໃຈຫລາຍທີ່ສຸດ; ຍ້ອນວ່າທີອານຄຳເປັນ
ຄົນທີ່ໄດ້ຕໍ່ສູ້ຢ່າງກ້າຫານເພື່ອປະເທດຊາດ
ຂອງລາວ, ແທ້ຈິງແລ້ວ, ເປັນເພື່ອນແທ້ໆ
ຂອງເສລີພາບ; ແລະ ລາວໄດ້ທົນຕໍ່ຄວາມ
ທຸກຢ່າງແສນສາຫັດ ຢ່າງຫລວງຫລາຍມາ
ແລ້ວ. ແຕ່ຈົ່ງເບິ່ງ, ລາວໄດ້ຕາຍໄປເສຍ
ແລ້ວຕາມທາງຂອງໂລກ.
38 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນໄດ້ອອກເດີນທັບໃນມື້ຕໍ່ມາ, ແລະ
ໄດ້ເຂົ້າໂຈມຕີຊາວເລມັນ, ເຖິງຂະໜາດ
ທີ່ເຂົາເຈົ້າໄດ້ຂ້າພວກເຂົາລົງຢ່າງຫລວງ
ຫລາຍ; ແລະ ເຂົາເຈົ້າໄດ້ຂັບໄລ່ພວກເຂົາ
ອອກຈາກແຜ່ນດິນໄປ; ແລະ ພວກເຂົາໄດ້
ໜີໄປຈົນວ່າບໍ່ໄດ້ກັບຄືນມາຕໍ່ສູ້ກັບຊາວ
ນີໄຟອີກເລີຍໃນເວລານັ້ນ.
39 ແລະ ປີທີສາມສິບເອັດແຫ່ງການປົກ
ຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້
ສິ້ນສຸດລົງດັ່ງນີ້; ຊຶ່ງພວກເຂົາໄດ້ມີສົງຄາມ,
ແລະ ມີການນອງເລືອດ, ແລະ ມີຄວາມ
ອຶດຢາກ, ແລະ ມີຄວາມທຸກຢູ່ດັ່ງນັ້ນເປັນ
ເວລາຫລາຍປີ.
40 ແລະ ມັນໄດ້ມີການຄາດຕະກຳ, ແລະ
ມີການຂັດແຍ້ງ, ແລະ ມີການແຕກແຍກ,
ແລະ ມີຄວາມຊົ່ວຮ້າຍນາໆປະການຢູ່ໃນ
ບັນດາຜູ້ຄົນຂອງນີໄຟ; ເຖິງຢ່າງໃດກໍຕາມ
ເພື່ອເຫັນແກ່ [ກ]ຄົນຊອບທຳ, ແທ້ຈິງແລ້ວ,
ເປັນຍ້ອນຄຳອະທິຖານຂອງຄົນທີ່ຊອບ
ທຳ, ພວກເຂົາຈຶ່ງໄດ້ຮັບການໄວ້ຊີວິດ.
41 ແຕ່ຈົ່ງເບິ່ງ, ຍ້ອນວ່າໄລຍະເວລາ
ຂອງສົງຄາມນັ້ນຍາວນານຫລາຍ
ລະຫວ່າງຊາວນີໄຟ ແລະ ຊາວເລມັນ ຄົນ
ຈຳນວນຫລວງຫລາຍຈຶ່ງແຂງກະດ້າງຂຶ້ນ,
ເພາະໄລຍະເວລາອັນຍາວນານຂອງສົງ
ຄາມ; ແລະ ຄົນຈຳນວນຫລວງຫລາຍຈຶ່ງ
ອ່ອນໂຍນລົງເພາະ [ກ]ຄວາມທຸກຂອງພວກ
ເຂົາ, ເຖິງຂະໜາດທີ່ພວກເຂົາໄດ້ຖ່ອມຕົວ
ລົງຕໍ່ພຣະພັກຂອງພຣະເຈົ້າ, ຈົນເຖິງສ່ວນ
ເລິກແຫ່ງຄວາມຖ່ອມຕົວ.
42 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກໂມໂຣໄນໄດ້ເສີມກຳລັງໃຫ້ພາກ
ຕ່າງໆທີ່ຢູ່ໃກ້ກັບແຜ່ນດິນຂອງຊາວເລມັນ
ຈົນວ່າມີກຳລັງພຽງພໍແລ້ວ, ເພິ່ນຈຶ່ງໄດ້ກັບ
ຄືນໄປເມືອງເຊຣາເຮັມລາ; ແລະ ຮີລາມັນ
ກໍໄດ້ກັບໄປຫາບ້ານເກີດເມືອງນອນຂອງ
ເພິ່ນຄືກັນ; ແລະ ມັນກໍມີການສະຖາປະນາ
ສັນຕິສຸກຂຶ້ນອີກເທື່ອໜຶ່ງໃນບັນດາຜູ້ຄົນ
ຂອງນີໄຟ.
43 ແລະ ໂມໂຣໄນໄດ້ມອບອຳນາດຂອງ
ຜູ້ບັງຄັບບັນຊາກອງທັບຂອງເພິ່ນໃຫ້ຢູ່ໃນ
ການບັນຊາຂອງລູກຊາຍຂອງເພິ່ນ ຜູ້ມີຊື່
ວ່າ ໂມໂຣໄນຮາ; ແລະ ເພິ່ນກໍໄດ້ກັບໄປຢູ່
ນຳຄອບຄົວຂອງເພິ່ນ ເພື່ອຈະໄດ້ໃຊ້ເວລາ
ທີ່ເຫລືອຢູ່ນັ້ນຂອງເພິ່ນກັບຄວາມສະຫງົບ
ສຸກ.
44 ແລະ ເພໂຮຣັນກໍໄດ້ກັບຄືນໄປຫາ
ບັນລັງຕັດສິນຂອງເພິ່ນເໝືອນເດີມ; ແລະ
ຮີລາມັນໄດ້ຮັບໜ້າທີ່ສັ່ງສອນພຣະຄຳຂອງ
ພຣະເຈົ້າໃຫ້ຜູ້ຄົນຄືນອີກ; ຍ້ອນວ່າມັນມີ
ສົງຄາມ ແລະ ການຂັດແຍ້ງກັນຢ່າງຫລວງ
ຫລາຍເຊັ່ນນັ້ນ ມັນຈຶ່ງສົມຄວນທີ່ຈະຕັ້ງຂໍ້
ບັງຄັບຂຶ້ນອີກໃນສາດສະໜາຈັກ.
45 ສະນັ້ນ, ຮີລາມັນ ແລະ ພີ່ນ້ອງຂອງ
ເພິ່ນຈຶ່ງອອກໄປ ແລະ ໄດ້ປະກາດພຣະ
ຄຳຂອງພຣະເຈົ້າດ້ວຍພະລັງອັນມະຫາ
ສານໃຫ້ຜູ້ຄົນເປັນຈຳນວນຫລວງຫລາຍ
[ກ]ສຳນຶກເຖິງຄວາມຊົ່ວຮ້າຍຂອງຕົນ, ຊຶ່ງ
ໄດ້ເຮັດໃຫ້ພວກເຂົາກັບໃຈຈາກບາບ

40 *ກ* ແອວ 45:15–16.
41 *ກ* ຄມພ ຍາກລຳບາກ, ຄວາມຍາກລຳບາກ.
45 *ກ* ຄພ 18:44.

ຂອງ ພວກ ເຂົາ ແລະ ຮັບ ບັບຕິ ສະມາ ໄວ້
ກັບພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາ.
46 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ສະຖາປະນາສາດສະໜາຈັກ
ຂອງພຣະເຈົ້າຂຶ້ນອີກຕະຫລອດທົ່ວແຜ່ນ
ດິນ.
47 ແທ້ຈິງແລ້ວ, ແລະ ພວກເຂົາໄດ້ຕັ້ງ
ຂໍ້ບັງຄັບຂຶ້ນຊຶ່ງກ່ຽວກັບກົດໝາຍ. ແລະ ມີ
ການ ເລືອກຕັ້ງ [ກ]ຜູ້ຕັດສິນ ແລະ ຫົວ ໜ້າ
ຂອງຜູ້ຕັດສິນຂຶ້ນອີກ.
48 ແລະ ຜູ້ຄົນຂອງນີໄຟກໍເລີ່ມ [ກ]ຈະເລີນ
ຮຸ່ງເຮືອງຂຶ້ນຢ່າງຍິ່ງໃນແຜ່ນດິນອີກ, ແລະ
ເລີ່ມມີຜູ້ຄົນເພີ່ມທະວີຂຶ້ນ ແລະ ເຂັ້ມແຂງ
ຫລາຍຂຶ້ນໃນແຜ່ນດິນ. ແລະ ພວກເຂົາ
ເລີ່ມຮັ່ງມີເປັນດີຢ່າງຍິ່ງ.
49 ເຖິງ ແມ່ນ ວ່າພວກເຂົາຈະມີເຄື່ອງ
ຂອງທີ່ມີຄຸນຄ່າ, ຫລື ພະລັງ, ຫລື ຄວາມ
ຈະເລີນຮຸ່ງເຮືອງຕ່າງໆ, ແຕ່ພວກເຂົາບໍ່
ໄດ້ລະເມີເພີ້ຝັນດ້ວຍຄວາມທະນົງຕົວໃນ
ສາຍຕາຂອງຕົນເອງເລີຍ; ທັງພວກເຂົາບໍ່
ໄດ້ຊັກຊ້າທີ່ຈະລະນຶກເຖິງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຂົາ; ແຕ່ພວກ
ເຂົາໄດ້ຖ່ອມຕົວທີ່ສຸດຕໍ່ພຣະພັກຂອງພຣະ
ອົງ.
50 ແທ້ຈິງແລ້ວ, ພວກເຂົາຈື່ຈຳສະເໝີ
ເຖິງ ສິ່ງທີ່ຍິ່ງໃຫຍ່ທີ່ພຣະຜູ້ເປັນເຈົ້າໄດ້
ກະທຳເພື່ອພວກເຂົາ, ວ່າພຣະອົງໄດ້ປົດ
ປ່ອຍ ພວກເຂົາອອກຈາກຄວາມຕາຍ,
ແລະ ອອກຈາກພັນທະການ, ແລະ ອອກ
ຈາກຄຸກ, ແລະ ພົ້ນຈາກຄວາມທຸກນາໆປະ
ການ, ແລະ ພຣະອົງໄດ້ປົດປ່ອຍພວກເຂົາ
ໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ.
51 ແລະ ພວກເຂົາໄດ້ອະທິຖານຫາ
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາຢູ່ສະເໝີ, ເຖິງຂະໜາດທີ່ພຣະຜູ້
ເປັນເຈົ້າໄດ້ປະທານພອນໃຫ້ແກ່ພວກເຂົາ
ຕາມພຣະຄຳຂອງພຣະອົງ, ຈົນວ່າພວກ
ເຂົາໄດ້ໝັ້ນຄົງ ແລະ ຮຸ່ງເຮືອງຢູ່ໃນແຜ່ນ
ດິນດັ່ງນີ້.
52 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຫດ
ການທັງໝົດນີ້ເປັນໄປ. ແລະ ຮີລາມັນໄດ້
ສິ້ນຊີວິດໄປ, ໃນປີທີສາມສິບຫ້າແຫ່ງການ
ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງ
ນີໄຟ.

## ບົດທີ 63

*ຊິບລັນ ແລະ ຕໍ່ມາຮີລາມັນໄດ້ຄອບຄອງ
ບັນທຶກສັກສິດໄວ້—ຊາວນີໄຟຈຳນວນ
ຫລວງຫລາຍເດີນທາງໄປຫາແຜ່ນດິນທາງ
ເໜືອ—ເຮກອດສ້າງເຮືອໃຫຍ່ລຳໜຶ່ງ, ຊຶ່ງ
ປ່ອຍມັນລົງສູ່ທະເລທາງຕາເວັນຕົກ—
ໂມໂຣໄນຮາເອົາຊະນະຊາວເລມັນໃນສະ
ໜາມຮົບ. ປະມານ 56–52 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນຕົ້ນ
ປີທີສາມສິບຫົກແຫ່ງການປົກຄອງຂອງ
ຜູ້ຕັດສິນດູແລຜູ້ຄົນຂອງນີໄຟຄື [ກ]ຊິບລັນ
ໄດ້ຄອບຄອງສິ່ງ [ຂ]ສັກສິດເຫລົ່ານີ້ໄວ້ ຊຶ່ງ
ແອວມາໄດ້ມອບໃຫ້ແກ່ຮີລາມັນ.
2 ແລະ ເພິ່ນເປັນຄົນທ່ຽງທຳ, ແລະ ເພິ່ນ
ໄດ້ເດີນໄປຢ່າງພາກພູມໃຈຕໍ່ພຣະພັກ
ຂອງພຣະເຈົ້າ; ແລະ ເພິ່ນໄດ້ຕັ້ງໃຈທີ່ຈະ
ສ້າງຄວາມດີຢູ່ຕະຫລອດເວລາ, ທີ່ຈະຮັກ
ສາພຣະບັນຍັດຂອງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງເພິ່ນ; ແລະ ອ້າຍຂອງ
ເພິ່ນກໍໄດ້ເຮັດເຊັ່ນດຽວກັນ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ

47 *ກ* ມຊຍ 29:39.
48 *ກ* ແອວ 50:20.
**63** 1 *ກ* ແອວ 38:1–2.
*ຂ* ແອວ 37:1–12.
ຄມພ ສັກສິດ,
ຄວາມສັກສິດ.

ໂຮໄນໄດ້ສິ້ນຊີວິດໄປຄືກັນ. ແລະ ປີທີສາມ
ສິບຫົກແຫ່ງການປົກຄອງຂອງຜູ້ຕັດສິນໄດ້
ສິ້ນສຸດລົງດັ່ງນັ້ນ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີທີສາມສິບເຈັດແຫ່ງການປົກຄອງຂອງ
ຜູ້ຕັດສິນ, ມັນໄດ້ມີຜູ້ຊາຍກຸ່ມໃຫຍ່ກຸ່ມໜຶ່ງ
ເປັນຈຳນວນເຖິງຫ້າພັນສີ່ຮ້ອຍຄົນ, ພ້ອມ
ດ້ວຍເມຍຂອງພວກເຂົາ ແລະ ລູກຂອງ
ພວກເຂົາ, ໄດ້ເດີນທາງອອກຈາກແຜ່ນດິນ
ເຊຣາເຮັມລາໄປຫາແຜ່ນດິນຊຶ່ງຢູ່ [ກ]ທາງ
ເໜືອ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຮ
ກອດເປັນຄົນທີ່ຢາກຮູ້ຢາກເຫັນຫລາຍທີ່
ສຸດ, ສະນັ້ນ ລາວຈຶ່ງໄດ້ອອກໄປ ແລະ ສ້າງ
ເຮືອໃຫຍ່ລຳໜຶ່ງທີ່ຊາຍແດນຂອງແຜ່ນດິນ
ອຸດົມສົມບູນ, ຊຶ່ງຢູ່ໃກ້ກັບແຜ່ນດິນຮ້າງ,
ແລະ ໄດ້ປ່ອຍມັນລົງສູ່ທະເລທາງຕາເວັນ
ຕົກໃກ້ [ກ]ທາງແຄບ ຊຶ່ງນຳໄປຫາແຜ່ນດິນ
ທາງເໜືອ.
6 ແລະ ຈົ່ງເບິ່ງ, ຊາວນີໄຟເປັນຈຳນວນ
ຫລວງຫລາຍໄດ້ລົງໄປໃນເຮືອນັ້ນ ແລະ
ໄດ້ຂີ່ໄປພ້ອມດ້ວຍສະບຽງອາຫານຢ່າງ
ຫລວງຫລາຍ, ແລະ ມີແມ່ຍິງ ແລະ ເດັກ
ນ້ອຍຫລາຍຄົນນຳອີກ; ແລະ ພວກເຂົາຂັບ
ເຮືອໄປທາງເໜືອ. ແລະ ປີທີສາມສິບເຈັດ
ໄດ້ສິ້ນສຸດລົງດັ່ງນີ້.
7 ແລະ ໃນປີທີສາມສິບແປດ, ຜູ້ຊາຍຄົນ
ນີ້ກໍໄດ້ສ້າງເຮືອໃຫຍ່ອີກລຳໜຶ່ງ. ແລະ ເຮືອ
ລຳທຳອິດກໍໄດ້ກັບຄືນມາອີກ, ແລະ ມີຜູ້ຄົນ
ເປັນຈຳນວນຫລວງຫລາຍລົງໄປໃນເຮືອ;
ແລະ ພວກເຂົາໄດ້ເອົາສະບຽງອາຫານຢ່າງ
ຫລວງຫລາຍໄປນຳ, ແລະ ອອກເດີນທາງ
ໄປຫາແຜ່ນດິນທາງເໜືອອີກ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ບໍ່ມີຜູ້
ໃດໄດ້ຂ່າວຄາວຂອງພວກເຂົາເລີຍ. ແລະ
ພວກເຮົາຄິດວ່າ ພວກເຂົາຈົມຢູ່ໃນຄວາມ
ເລິກຂອງທະເລເສຍແລ້ວ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ມີເຮືອໃຫຍ່ອີກລຳໜຶ່ງໄດ້
ແລ່ນອອກໄປອີກ; ແລະ ພວກເຮົາບໍ່ຮູ້ຈັກ
ວ່າມັນໄປທາງໃດ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີນີ້ ມີຜູ້ຄົນເປັນຈຳນວນຫລວງຫລາຍທີ່
ອອກໄປຫາແຜ່ນດິນ [ກ]ທາງເໜືອ. ແລະ ປີ
ທີສາມສິບແປດໄດ້ສິ້ນສຸດລົງດັ່ງນີ້.
10 ແລະ ເຫດການໄດ້ບັງເກີດຂຶ້ນໃນ
ປີທີສາມສິບເກົ້າແຫ່ງການປົກຄອງຂອງ
ຜູ້ຕັດສິນ, ຊິບລັນໄດ້ເສຍຊີວິດໄປ, ແລະ
ໂຄຣິອານທັນໄດ້ອອກໄປຫາແຜ່ນດິນທາງ
ເໜືອໃນເຮືອລຳໜຶ່ງ, ເພື່ອນຳເອົາສະບຽງ
ອາຫານໄປໃຫ້ຜູ້ຄົນທີ່ອອກໄປຫາແຜ່ນດິນ
ນັ້ນ.
11 ສະນັ້ນ ມັນຈຶ່ງເປັນການສົມຄວນສຳ
ລັບຊິບລັນທີ່ຈະມອບສິ່ງສັກສິດເຫລົ່ານີ້ໃຫ້
ແກ່ລູກຊາຍຂອງ [ກ]ຮີລາມັນ, ຜູ້ມີຊື່ວ່າ ຮີລາ
ມັນ, ໂດຍເອີ້ນຕາມຊື່ບິດາຂອງລາວ.
12 ບັດນີ້ຈົ່ງເບິ່ງ, [ກ]ອັກຂະລະທັງໝົດນັ້ນ
ຊຶ່ງຢູ່ໃນການຄອບຄອງຂອງຮີລາມັນຖືກ
ຂຽນຂຶ້ນ ແລະ ຖືກສົ່ງອອກໄປໃນບັນດາ
ລູກຫລານມະນຸດຕະຫລອດທົ່ວແຜ່ນດິນ
ນອກຈາກສ່ວນຕ່າງໆຊຶ່ງແອວມາສັ່ງຫ້າມ
[ຂ]ບໍ່ໃຫ້ສົ່ງອອກໄປ.
13 ເຖິງຢ່າງໃດກໍຕາມ, ສິ່ງເຫລົ່ານີ້ຕ້ອງ
ໄດ້ຮັບການປົກປັກຮັກສາໄວ້ໃຫ້ເປັນສິ່ງ
ສັກສິດ, ແລະ [ກ]ມອບຕໍ່ໆກັນໄປຈາກຄົນ
ລຸ້ນໜຶ່ງຫາຄົນອີກລຸ້ນໜຶ່ງ; ສະນັ້ນ, ໃນປີນີ້,
ສິ່ງສັກສິດເຫລົ່ານີ້ຈຶ່ງຖືກມອບໃຫ້ແກ່ຮີລາ

4 *ກ* ແອວ 22:31.
5 *ກ* ແອວ 22:32; ອທ 10:20.
9 *ກ* ຣລມ 3:11–12.
11 *ກ* ເບິ່ງ ຫົວຂໍ້ຂອງ ໜັງສືຮີລາມັນ.
12 *ກ* ແອວ 18:36.
*ຂ* ແອວ 37:27–32.
13 *ກ* ແອວ 37:4.

ມັນ, ກ່ອນການຕາຍຂອງຊິບລັນ.
14 ແລະ ເຫດການໄດ້ບັງເກີດຂຶ້ນອີກ
ໃນປີນີ້ຄື ມີຜູ້ຄົນຈຳນວນໜຶ່ງໄດ້ແຍກອອກ
ໄປຫາຊາວເລມັນ; ແລະ ພວກເຂົາຖືກຊັກ
ຊວນໃຫ້ຄຽດແຄ້ນໃຫ້ຊາວນີໄຟຄືນອີກ.
15 ແລະ ໃນປີດຽວກັນນີ້ອີກ ພວກເຂົາ
ໄດ້ຍົກທັບລົງມາພ້ອມດ້ວຍກອງທັບອັນມີ
ກຳລັງມະຫາສານ ເພື່ອມາກໍ່ສົງຄາມກັບ
ຜູ້ຄົນຂອງໂມໂຣໄນຮາ, ຫລື ກັບກອງທັບ
ຂອງ [ກ]ໂມໂຣໄນຮາ, ຊຶ່ງຕ້ອງເຮັດໃຫ້ພວກ
ເຂົາຕ້ອງພ່າຍແພ້ ແລະ ຖືກຂັບໄລ່ໃຫ້ກັບ
ຄືນໄປຫາແຜ່ນດິນຂອງພວກເຂົາຄືເກົ່າ,
ໂດຍໄດ້ຮັບຄວາມເສຍຫາຍຢ່າງໜັກ.
16 ແລະ ໃນປີທີສາມສິບເກົ້າແຫ່ງການ
ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງ
ນີໄຟກໍສິ້ນສຸດລົງດັ່ງນີ້.
17 ແລະ ເລື່ອງລາວຂອງແອວມາ, ແລະ
ຮີລາມັນລູກຊາຍຂອງເພິ່ນ, ແລະ ຊິບລັນ
ນຳອີກ ຜູ້ເປັນລູກຊາຍຂອງເພິ່ນກໍໄດ້ສິ້ນ
ສຸດລົງດັ່ງນີ້.

# ໜັງສືຮີລາມັນ

ເລື່ອງລາວຂອງຊາວນີໄຟ. ສົງຄາມ ແລະ ການຂັດແຍ້ງຂອງພວກເຂົາ, ແລະ ການແຕກແຍກຂອງພວກເຂົາ. ແລະ ເລື່ອງລາວຂອງການທຳນາຍຂອງສາດສະດາຜູ້ບໍລິສຸດຫລາຍທ່ານທີ່ໄດ້ທຳນາຍໄວ້ກ່ອນການສະເດັດມາຂອງພຣະຄຣິດນຳອີກ, ຕາມບັນທຶກຂອງຮີລາມັນນຳອີກ, ຜູ້ເປັນລູກຊາຍຂອງຮີລາມັນ, ແລະ ຕາມບັນທຶກຂອງພວກລູກຊາຍຂອງເພິ່ນນຳອີກ, ຈົນມາຮອດການສະເດັດມາຂອງພຣະຄຣິດ. ແລະ ຊາວເລມັນເປັນຈຳນວນຫລວງຫລາຍໄດ້ປ່ຽນໃຈເຫລື້ອມໃສນຳອີກ. ແລະ ເລື່ອງລາວຂອງການປ່ຽນໃຈເຫລື້ອມໃສຂອງພວກເຂົາ. ເລື່ອງລາວກ່ຽວກັບຄວາມຊອບທຳຂອງຊາວເລມັນ, ແລະ ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງຊາວນີໄຟ, ຕາມບັນທຶກຂອງຮີລາມັນ ແລະ ລູກຊາຍຂອງເພິ່ນ, ຈົນມາເຖິງການສະເດັດມາຂອງພຣະຄຣິດ, ຊຶ່ງເອີ້ນວ່າໜັງສືຮີລາມັນ, ແລະ ອື່ນໆ.

## ບົດທີ 1

*ເພໂຣຣັນ ຜູ້ເປັນລູກຊາຍກາຍເປັນຫົວໜ້າຜູ້ຕັດສິນ ແລະ ຖືກລອບຂ້າໂດຍຄິດຄູເມັນ—ແລ້ວເພຄິວເມໄນກໍຮັບຕຳແໜ່ງບັນລັງຕັດສິນແທນ—ໂຄຣິອານທະເມີນຳພາກອງທັບເລມັນ, ຍຶດເອົາເຊຣາເຮັມລາໄປ, ແລະ ຂ້າເພຄິວເມໄນ—ໂມໂຣໄນຮາຊະນະຊາວເລມັນ ແລະ ຍຶດເອົາເຊຣາເຮັມລາຄືນມາ, ແລະ ໂຄຣິອານທະເມີຖືກຂ້າ. ປະມານ 52–50 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ຈົ່ງເບິ່ງ, ເຫດການໄດ້ບັງ
ເກີດຂຶ້ນໃນຕົ້ນປີທີສີ່ສິບແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ມັນໄດ້
ເລີ່ມມີຄວາມຫຍຸ້ງຍາກຢ່າງຮ້າຍແຮງເກີດ
ຂຶ້ນໃນບັນດາຜູ້ຄົນຂອງນີໄຟ.
2 ເພາະຈົ່ງເບິ່ງ, [ກ]ເພໂຣຣັນໄດ້ສິ້ນຊີວິດ

15 *ກ* ແອວ 62:43.

[ຮີລາມັນ]
**1** 2 *ກ* ແອວ 50:40.

ໄປ ແລະ ໄດ້ໄປຕາມທາງຂອງໂລກແລ້ວ;
ສະນັ້ນ ມັນຈຶ່ງເລີ່ມມີການຂັດແຍ້ງຢ່າງຮຸນ
ແຮງກ່ຽວກັບວ່າຜູ້ໃດໃນບັນດາອ້າຍນ້ອງ
ກັນ ຊຶ່ງເປັນພວກລູກຊາຍຂອງເພໂຮຣັນ
ຈະໄດ້ນັ່ງບັນລັງຕັດສິນ.
3 ບັດນີ້ ນີ້ຄືລາຍຊື່ຂອງຜູ້ທີ່ຂັດແຍ້ງກັນ
ເພື່ອນັ່ງບັນລັງຕັດສິນ ຜູ້ຊຶ່ງໄດ້ເຮັດໃຫ້ຜູ້
ຄົນຂັດແຍ້ງກັນນຳອີກ: ເພໂຮຣັນ, ເພອານ
ໄຄ, ແລະ ເພຄິວເມໄນ.
4 ບັດນີ້ເພໂຮຣັນບໍ່ໄດ້ມີລູກຊາຍພຽງແຕ່
ສາມຄົນເທົ່ານັ້ນ (ເພາະເພິ່ນມີລູກຊາຍ
ຫລາຍຄົນ), ແຕ່ສາມຄົນນີ້ເປັນຜູ້ທີ່ຂັດ
ແຍ້ງກັນເພື່ອນັ່ງບັນລັງຕັດສິນ; ສະນັ້ນ,
ພວກເຂົາຈຶ່ງເຮັດໃຫ້ເກີດການແບ່ງແຍກ
ກັນຂຶ້ນເປັນສາມກຸ່ມໃນບັນດາຜູ້ຄົນ.
5 ເຖິງຢ່າງໃດກໍຕາມ, ເຫດການໄດ້ບັງ
ເກີດຂຶ້ນຄື ເພໂຮຣັນໄດ້ຖືກແຕ່ງຕັ້ງໂດຍ
[ກ]ສຽງຂອງຜູ້ຄົນໃຫ້ເປັນຫົວໜ້າຜູ້ຕັດສິນ
ແລະ ເປັນຜູ້ປົກຄອງດູແລຜູ້ຄົນຂອງນີໄຟ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພ
ຄິວເມໄນ, ເມື່ອລາວເຫັນວ່າຕົນເອງບໍ່ໄດ້
ນັ່ງບັນລັງຕັດສິນແລ້ວ, ລາວຈຶ່ງເຫັນພ້ອມ
ກັບສຽງຂອງຜູ້ຄົນ.
7 ແຕ່ຈົ່ງເບິ່ງ, ເພອານໄຄ, ແລະ ຜູ້ຄົນຜູ້
ທີ່ປາດຖະໜາໃຫ້ລາວເປັນຜູ້ປົກຄອງຂອງ
ຕົນກໍມີຄວາມຄຽດແຄ້ນຂຶ້ນ; ສະນັ້ນ, ລາວ
ຈຶ່ງໄດ້ຍຸຍົງຜູ້ຄົນພວກນັ້ນໃຫ້ລຸກຂຶ້ນໃນ
ການກະບົດຕໍ່ອ້າຍນ້ອງຂອງລາວເອງ.
8 ແລະ ເຫດການໄດ້ບັງເກີດຂຶ້ນຂະນະ
ທີ່ລາວກຳລັງກໍ່ການກະບົດຢູ່ນັ້ນ, ຈົ່ງເບິ່ງ,
ລາວໄດ້ຖືກຈັບໄປ, ແລະ ຖືກຕັດສິນຕາມ
ສຽງຂອງຜູ້ຄົນ, ແລະ ຕ້ອງໄດ້ຮັບໂທດປະ
ຫານຊີວິດ; ເພາະວ່າລາວໄດ້ກໍ່ການກະ
ບົດຂຶ້ນ ແລະ ພະຍາຍາມທີ່ຈະທຳລາຍ
[ກ]ເສລີພາບຂອງຜູ້ຄົນ.
9 ບັດນີ້ເວລາພວກທີ່ຢາກໃຫ້ເພອານໄຄ
ເປັນຜູ້ປົກຄອງຂອງຕົນເຫັນວ່າເພອານໄຄ
ໄດ້ຮັບໂທດປະຫານຊີວິດແລ້ວ, ສະນັ້ນ
ພວກເຂົາຈຶ່ງຄຽດແຄ້ນ, ແລະ ຈົ່ງເບິ່ງ,
ພວກເຂົາໄດ້ສົ່ງຄົນຜູ້ໜຶ່ງຊື່ວ່າ ຄິດຄູເມັນ,
ໄປທີ່ບັນລັງຕັດສິນຂອງເພໂຮຣັນ, ແລະ
ລອບຂ້າເພໂຮຣັນໃນຂະນະທີ່ເພິ່ນນັ່ງຢູ່
ໃນບັນລັງຕັດສິນຢູ່ນັ້ນ.
10 ແລະ ຂ້າໃຊ້ຂອງເພໂຮຣັນໄດ້ໄລ່ຕິດ
ຕາມຄິດຄູເມັນໄປ; ແຕ່ຈົ່ງເບິ່ງ, ຄິດຄູເມັນ
ໄດ້ປົບໜີໄປຢ່າງວ່ອງໄວທີ່ສຸດ ຈົນວ່າບໍ່ມີ
ຜູ້ໃດໄລ່ຕາມລາວທັນ.
11 ແລະ ລາວໄດ້ກັບຄືນໄປຫາຜູ້ທີ່ໃຊ້
ລາວມາ, ແລະ ພວກເຂົາທັງໝົດໄດ້ເຮັດ
ພັນທະສັນຍາຮ່ວມກັນ, ແທ້ຈິງແລ້ວ, ໄດ້
ສາບານໂດຍອ້າງເຖິງພຣະຜູ້ສ້າງທີ່ເປັນ
ນິດຂອງພວກເຂົາ, ວ່າບໍ່ໃຫ້ເປີດເຜີຍໃຫ້ຜູ້
ໃດຮູ້ວ່າ ຄິດຄູເມັນໄດ້ລອບຂ້າເພໂຮຣັນ.
12 ສະນັ້ນ, ຈຶ່ງບໍ່ມີຜູ້ໃດຮູ້ຈັກຄິດຄູເມັນ
ເລີຍໃນບັນດາຜູ້ຄົນຂອງນີໄຟ, ເພາະວ່າ
ລາວໄດ້ປອມຕົວເຂົ້າໄປລອບຂ້າເພໂຮ
ຣັນ. ແລະ ຄິດຄູເມັນພ້ອມດ້ວຍພັກພວກ
ຂອງລາວກໍໄດ້ເຮັດພັນທະສັນຍານຳກັນ,
ໄດ້ປະປົນຢູ່ໃນບັນດາຜູ້ຄົນ, ໂດຍວິທີທີ່ຈະ
ຊອກຫາພວກເຂົາບໍ່ເຫັນ; ແຕ່ຄົນທີ່ຖືກພົບ
ເຫັນຕ້ອງຮັບໂທດ [ກ]ປະຫານຊີວິດ.
13 ແລະ ບັດນີ້ຈົ່ງເບິ່ງ, ເພຄິວເມໄນໄດ້
ຖືກແຕ່ງຕັ້ງໂດຍສຽງຂອງຜູ້ຄົນໃຫ້ເປັນ
ຫົວໜ້າຜູ້ຕັດສິນ, ແລະ ເປັນຜູ້ປົກຄອງດູ
ແລຜູ້ຄົນແທນເພໂຮຣັນອ້າຍຂອງລາວ.
ແລະ ມັນເປັນໄປຕາມສິດທິຂອງລາວທີ່
ຄວນຈະໄດ້ຮັບ. ແລະ ທັງໝົດນີ້ເປັນໄປ
ໃນປີທີສີ່ສິບແຫ່ງການປົກຄອງຂອງຜູ້ຕັດ

5 *ກ* ມຊຢ 29:26–29.
8 *ກ* ຄມພ ເສລີພາບ.
12 *ກ* ຄມພ ໂທດປະຫານຊີວິດ.

ສິນ ແລະ ມັນໄດ້ສິ້ນສຸດລົງດັ່ງນີ້.

14 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນ, ຄືຊາວເລມັນໄດ້ເຕົ້າໂຮມກອງທັບອັນມີກຳລັງຄົນນັບບໍ່ຖ້ວນ, ແລະ ປະກອບອາວຸດດ້ວຍຫອກ ແລະ ດາບ, ແລະ ດ້ວຍຄັນທະນູ, ແລະ ລູກທະນູ, ແລະ ດ້ວຍເຄື່ອງປ້ອງກັນຫົວ ແລະ ແຜ່ນປົກເອິກ, ແລະ ເຄື່ອງປ້ອງກັນທຸກຊະນິດ.

15 ແລະ ພວກເຂົາໄດ້ຍົກທັບລົງມາອີກເພື່ອຈະໄດ້ສູ້ຮົບກັບຊາວນີໄຟ. ແລະ ພວກເຂົາໄດ້ຮັບການບັງຄັບບັນຊາໂດຍໂຄຣິອານທະເມີ; ແລະ ລາວເປັນຜູ້ສືບເຊື້ອສາຍຂອງເຊຣາເຮັມລາ; ແລະ ລາວເປັນຜູ້ທີ່ແຍກອອກໄປຈາກບັນດາຊາວນີໄຟ; ແລະ ເປັນຄົນຮ່າງໃຫຍ່ ແລະ ມີກຳລັງຫລາຍ.

16 ສະນັ້ນ, ກະສັດ ຂອງ ຊາວ ເລມັນ ຜູ້ມີຊື່ວ່າ ທຸບະລອດ, ຜູ້ເປັນລູກຊາຍຂອງ [ກ]ອາມໂມຣອນ, ຈຶ່ງຄິດວ່າໂຄຣິອານທະເມີເປັນຄົນມີກຳລັງແຂງແຮງ, ສະນັ້ນ ລາວຈະສາມາດຢືນຕໍ່ສູ້ກັບຊາວນີໄຟໄດ້, ແລະ ລາວກໍມີປັນຍາອັນແຫລມຄົມນຳອີກ, ເຖິງຂະໜາດທີ່ຖ້າສົ່ງລາວໄປ ລາວກໍຈະເອົາຊະນະຊາວນີໄຟໄດ້—

17 ສະນັ້ນ ລາວຈຶ່ງໄດ້ຍຸຍົງພວກເຂົາໃຫ້ຄຽດແຄ້ນ, ແລະ ລາວໄດ້ເຕົ້າໂຮມກອງທັບຂອງລາວ, ແລະ ໄດ້ແຕ່ງຕັ້ງໂຄຣິອານທະເມີເປັນຜູ້ນຳຂອງພວກເຂົາ, ແລະ ລາວໄດ້ສັ່ງໃຫ້ພວກເຂົາອອກເດີນທັບລົງໄປຫາແຜ່ນດິນເຊຣາເຮັມລາເພື່ອສູ້ຮົບກັບຊາວນີໄຟ.

18 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄືຍ້ອນວ່າມັນມີການຂັດແຍ້ງກັນ ແລະ ມີຄວາມຫຍຸ້ງຍາກຫລາຍໃນຝ່າຍຜູ້ປົກຄອງ, ຈຶ່ງເຮັດໃຫ້ພວກເຂົາບໍ່ມີທະຫານຍາມພຽງພໍຢູ່ໃນແຜ່ນດິນເຊຣາເຮັມລາ; ເພາະພວກເຂົາຄິດວ່າ ຊາວເລມັນຈະບໍ່ກ້າເຂົ້າມາເຖິງໃຈກາງຂອງແຜ່ນດິນ ເພື່ອມາຍຶດເອົາເມືອງເຊຣາເຮັມລາທີ່ຍິ່ງໃຫຍ່ນັ້ນ.

19 ແຕ່ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ເດີນທັບນຳໜ້າກອງທະຫານອັນມະຫາສານຂອງລາວມາ, ແລະ ເຂົ້າໂຈມຕີຜູ້ອາໄສຢູ່ໃນເມືອງນັ້ນ, ແລະ ການເດີນທັບຂອງພວກເຂົານັ້ນວ່ອງໄວທີ່ສຸດ ຈົນວ່າຊາວນີໄຟບໍ່ມີເວລາພຽງພໍທີ່ຈະເຕົ້າໂຮມກຳລັງກອງທັບຂອງຕົນ.

20 ສະນັ້ນ ໂຄຣິອານທະເມີຈຶ່ງໄດ້ຂ້າທະຫານຍາມທາງເຂົ້າເມືອງ, ແລະ ໄດ້ຍົກກອງທັບເຂົ້າໄປໃນເມືອງ ພ້ອມດ້ວຍກອງທັບທັງໝົດຂອງລາວ, ແລະ ພວກເຂົາໄດ້ຂ້າທຸກຄົນທີ່ຂັດຂວາງພວກເຂົາ, ເຖິງຂະໜາດທີ່ພວກເຂົາໄດ້ເຂົ້າເປັນເຈົ້າຂອງເມືອງທັງເມືອງ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພຄິວເມໄນ, ຜູ້ເປັນຫົວໜ້າຜູ້ຕັດສິນໄດ້ແລ່ນໜີໄປຕໍ່ໜ້າໂຄຣິອານທະເມີ, ໄປຮອດກຳແພງເມືອງ. ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ຟັນລາວຕິດກຳແພງຈົນລາວຕາຍ. ແລະ ວັນເວລາຂອງເພຄິວເມໄນກໍໄດ້ສິ້ນສຸດລົງດັ່ງນີ້.

22 ແລະ ບັດນີ້ເວລາໂຄຣິອານທະເມີເຫັນວ່າຕົນເອງໄດ້ຄອບຄອງເມືອງເຊຣາເຮັມລາແລ້ວ, ແລະ ເຫັນວ່າຊາວນີໄຟໄດ້ປົບໜີໄປຕໍ່ໜ້າພວກເຂົາ, ແລະ ໄດ້ຖືກຂ້າ, ແລະ ໄດ້ຖືກຈັບເຂົ້າຄຸກ, ແລະ ວ່າລາວໄດ້ຍຶດທີ່ໝັ້ນອັນເຂັ້ມແຂງທີ່ສຸດໃນທົ່ວແຜ່ນດິນໄດ້ແລ້ວ, ໃຈຂອງລາວກໍມີກຳລັງຂຶ້ນ

16ກ ແອວ 52:3.

ເຖິງຂະໜາດທີ່ລາວຄິດຈະຍົກທັບໄປສູ້ຮົບ
ທົ່ວແຜ່ນດິນ.
23 ແລະ ບັດນີ້ລາວບໍ່ໄດ້ຢຸດຢູ່ໃນແຜ່ນ
ດິນເຊຣາເຮັມລາເລີຍ, ແຕ່ລາວໄດ້ຍົກທັບ
ໄປດ້ວຍກອງທັບໃຫຍ່ຂອງລາວ, ແລະ ມຸ້ງ
ໜ້າໄປຫາເມືອງອຸດົມສົມບູນ; ເພາະວ່າມັນ
ເປັນຄວາມຕັ້ງໃຈຂອງລາວທີ່ຈະຍົກທັບ
ໄປ ແລະ ຈະຟາດຟັນໄປຕະຫລອດທາງ,
ເພື່ອຈະໄດ້ຍຶດເອົາແຜ່ນດິນພາກສ່ວນ
ຕ່າງໆທາງເໜືອ.
24 ແລະ ໂດຍທີ່ຄິດວ່າກຳລັງສ່ວນໃຫຍ່
ທີ່ສຸດຂອງຊາວນີໄຟຕັ້ງຢູ່ທີ່ໃຈກາງຂອງ
ແຜ່ນດິນ, ສະນັ້ນ ລາວຈຶ່ງໄດ້ຍົກທັບໄປ
ໂດຍບໍ່ໃຫ້ພວກເຂົາເຕົ້າໂຮມກັນໄດ້ ແຕ່
ເປັນກຸ່ມນ້ອຍໆເທົ່ານັ້ນ; ແລະ ໂດຍວິທີນີ້
ພວກເຂົາຈຶ່ງໄດ້ເຂົ້າໂຈມຕີ ແລະ ຟາດຟັນ
ພວກເຂົາລົງກັບພື້ນດິນ.
25 ແຕ່ຈົ່ງເບິ່ງ, ເທື່ອນີ້ໂຄຣິອານທະເມີ
ໄດ້ເດີນທັບຜ່ານໃຈກາງຂອງແຜ່ນດິນ
ໄປ ມັນຈຶ່ງເຮັດໃຫ້ໂມໂຣໄນຮາໄດ້ປຽບ
ພວກເຂົາ, ເຖິງແມ່ນວ່າຊາວນີໄຟຈຳນວນ
ຫລວງຫລາຍຖືກຂ້າຕາຍໄປແລ້ວກໍຕາມ.
26 ເພາະຈົ່ງເບິ່ງ, ໂມໂຣໄນຮາຄິດວ່າ
ຊາວເລມັນບໍ່ກ້າເຂົ້າມາໃຈກາງຂອງແຜ່ນ
ດິນ, ພຽງແຕ່ວ່າຈະເຂົ້າໂຈມຕີຫົວເມືອງ
ຕ່າງໆໂດຍອ້ອມແອ້ມຊາຍແດນຄືກັນກັບ
ທີ່ຊາວເລມັນໄດ້ເຮັດມາກ່ອນແລ້ວ; ສະນັ້ນ
ໂມໂຣໄນຮາຈຶ່ງໄດ້ສັ່ງໃຫ້ກອງທັບອັນເຂັ້ມ
ແຂງຂອງລາວໄປຮັກສາແຜ່ນດິນພາກ
ສ່ວນຕ່າງໆໂດຍອ້ອມຮອບໃກ້ຊາຍແດນ.
27 ແຕ່ຈົ່ງເບິ່ງ, ຊາວເລມັນບໍ່ໄດ້ຢ້ານກົວ
ໃນສິ່ງທີ່ລາວເຮັດໄປນັ້ນເລີຍ, ເພາະພວກ
ເຂົາໄດ້ຍົກທັບເຂົ້າເຖິງໃຈກາງຂອງແຜ່ນ
ດິນແລ້ວ, ແລະ ໄດ້ຍຶດເອົາເມືອງຫລວງ
ຊຶ່ງຄືເມືອງເຊຣາເຮັມລາ, ແລະ ກຳລັງເດີນ
ທັບຜ່ານຫລາຍຫົວເມືອງທີ່ສຳຄັນທີ່ສຸດ
ຂອງແຜ່ນດິນ, ແລະ ຂ້າຜູ້ຄົນຢ່າງຫລວງ
ຫລາຍກ່າຍກອງ, ທັງຜູ້ຊາຍ, ຜູ້ຍິງ, ແລະ
ເດັກນ້ອຍ, ຍຶດເອົາຫລາຍຫົວເມືອງ ແລະ
ທີ່ໝັ້ນຫລາຍບ່ອນ.
28 ແຕ່ເມື່ອໂມໂຣໄນຮາຮູ້ຈັກເລື່ອງນີ້
ແລ້ວ, ລາວກໍໄດ້ສົ່ງລີໄຮພ້ອມດ້ວຍກອງ
ທະຫານໄປປິດລ້ອມທັນທີ ເພື່ອຈະໄດ້ສະ
ກັດກັ້ນພວກເຂົາກ່ອນທີ່ພວກເຂົາຈະມາ
ຮອດແຜ່ນດິນອຸດົມສົມບູນ.
29 ແລະ ລາວໄດ້ເຮັດເຊັ່ນນີ້; ແລະ ໄດ້
ສະກັດກັ້ນພວກເຂົາໄວ້ກ່ອນທີ່ພວກເຂົາ
ຈະມາຮອດແຜ່ນດິນອຸດົມສົມບູນ, ແລະ
ໄດ້ເຂົ້າໂຈມຕີພວກເຂົາ, ເຖິງຂະໜາດທີ່
ພວກເຂົາເລີ່ມຖອຍທັບກັບຄືນໄປເຊຣາ
ເຮັມລາ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ໂຣໄນຮາໄດ້ສະກັດກັ້ນພວກເຂົາໄວ້ໃນ
ລະຫວ່າງການຖອຍທັບຂອງພວກເຂົາ,
ແລະ ໄດ້ເຂົ້າສູ້ຮົບກັນ, ເຖິງຂະໜາດທີ່
ມັນກາຍເປັນການຕໍ່ສູ້ອັນນອງເລືອດທີ່
ສຸດ; ແທ້ຈິງແລ້ວ, ຄົນເປັນຈຳນວນຫລວງ
ຫລາຍຖືກຂ້າ, ແລະ ໃນບັນດາພວກທີ່
ຕາຍນັ້ນມີ [ກ]ໂຄຣິອານທະເມີຢູ່ນຳ.
31 ແລະ ບັດນີ້, ຈົ່ງເບິ່ງຊາວເລມັນຈະ
ຖອຍທັບໄປທາງໃດກໍບໍ່ໄດ້, ບໍ່ວ່າຈະເປັນ
ທາງເໜືອ, ຫລື ທາງໃຕ້, ຫລື ທາງຕາເວັນ
ອອກ, ຫລື ທາງຕາເວັນຕົກ, ເພາະວ່າພວກ
ເຂົາຖືກຊາວນີໄຟອ້ອມໄວ້ທຸກດ້ານ.
32 ແລະ ສະຫລຸບຄວາມແລ້ວ ໂຄຣິອານ
ທະເມີໄດ້ນຳເອົາຊາວເລມັນເຂົ້າໄປເຖິງໃຈ
ກາງຂອງຊາວນີໄຟ, ເຖິງຂະໜາດທີ່ພວກ
ເຂົາຕົກຢູ່ໃນອຳນາດຂອງຊາວນີໄຟ, ແລະ

30 *ກ* ຣລມ 1:15.

ຕົວ ລາວ ເອງ ກໍ ຖືກ ຂ້າ ຕາຍ, ແລະ ຊາວເລມັນໄດ້ຍອມມອບຕົວໃຫ້ຢູ່ໃນກຳມືຂອງຊາວນີໄຟ.

33 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນຮາ ໄດ້ຍຶດເອົາເມືອງ ເຊຣາເຮັມລາຄືນອີກ, ແລະ ສັ່ງໃຫ້ຊາວເລມັນຜູ້ທີ່ຖືກຈັບມາເປັນຊະເລີຍເສິກນັ້ນອອກຈາກແຜ່ນດິນໂດຍສັນຕິ.

34 ແລະ ປີທີສີ່ສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້.

## ບົດທີ 2

*ຮີລາມັນຜູ້ເປັນລູກຊາຍຂອງຮີລາມັນກາຍເປັນຫົວໜ້າຜູ້ຕັດສິນ—ແກດີອານທັນເປັນຜູ້ນຳຂອງພັກຄິດຄູເມັນ—ຂ້າໃຊ້ຂອງຮີລາມັນຂ້າຄິດຄູເມັນ, ແລະ ພັກພວກຂອງແກດີອານທັນປົບໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ. ປະມານ 50–49 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບສອງແຫ່ງການປົກຄອງຂອງຜູ້ຕັດສິນ, ຫລັງຈາກໂມໂຣໄນຮາໄດ້ສະຖາປະນາສັນຕິພາບຂຶ້ນອີກລະຫວ່າງຊາວນີໄຟກັບຊາວເລມັນແລ້ວ, ຈົ່ງເບິ່ງ ບໍ່ມີຜູ້ໃດເລີຍທີ່ຈະຂຶ້ນສູ່ບັນລັງຕັດສິນ; ສະນັ້ນ ມັນຈຶ່ງເລີ່ມມີການຂັດແຍ້ງກັນຂຶ້ນອີກໃນບັນດາຜູ້ຄົນກ່ຽວກັບວ່າ ຜູ້ໃດສົມຄວນທີ່ຈະໄດ້ຂຶ້ນສູ່ບັນລັງຕັດສິນແທນ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຮີລາມັນ ຜູ້ເປັນລູກຊາຍຂອງຮີລາມັນ ໄດ້ຖືກແຕ່ງຕັ້ງໃຫ້ຂຶ້ນສູ່ບັນລັງຕັດສິນແທນໂດຍສຽງຂອງຜູ້ຄົນ.

3 ແຕ່ ຈົ່ງເບິ່ງ, [ກ]ຄິດຄູເມັນຜູ້ໄດ້ລອບຂ້າເພໂຮຣັນໄດ້ພະຍາຍາມທີ່ຈະທຳລາຍຊີວິດຂອງຮີລາມັນຄືກັນ; ແລະ ລາວໄດ້ຮັບການສະໜັບສະໜູນຈາກພັກພວກຂອງລາວ, ຜູ້ຊຶ່ງໄດ້ເຮັດພັນທະສັນຍາຮ່ວມກັນວ່າຈະບໍ່ບອກໃຫ້ຜູ້ໃດຮູ້ຈັກເຖິງຄວາມຊົ່ວຮ້າຍຂອງລາວ.

4 ເພາະມີຊາຍຄົນໜຶ່ງຊື່ວ່າ [ກ]ແກດີອານທັນ ເປັນຜູ້ທີ່ມີຄວາມຊຳນິຊຳນານໃນການປາກເວົ້າ ແລະ ກົນອຸບາຍເລ່ຫລ່ຽມທີ່ຈະເຮັດວຽກງານລັບກ່ຽວກັບການຄາດຕະກຳ ແລະ ປຸ້ນຈີ້; ສະນັ້ນ ລາວຈຶ່ງໄດ້ກາຍມາເປັນຜູ້ນຳຂອງພັກຄິດຄູເມັນ.

5 ສະນັ້ນ ລາວຈຶ່ງໄດ້ເວົ້າດີນຳພວກເຂົາ, ແລະ ຄິດຄູເມັນນຳອີກວ່າຖ້າຫາກພວກເຂົາຈະໃຫ້ລາວໄດ້ຂຶ້ນນັ່ງບັນລັງຕັດສິນແລ້ວລາວຈະໃຫ້ຜູ້ທີ່ຢູ່ໃນພັກຂອງລາວມີອຳນາດ ແລະ ສິດອຳນາດທີ່ສູງໃນບັນດາຜູ້ຄົນ; ສະນັ້ນ ຄິດຄູເມັນຈຶ່ງພະຍາຍາມທີ່ຈະຂ້າຮີລາມັນເສຍ.

6 ແລະ ເຫດການໄດ້ບັງເກີດຂຶ້ນໃນຂະນະທີ່ລາວກຳລັງເດີນທາງໄປຫາບັນລັງຕັດສິນເພື່ອຈະທຳຮ້າຍຮີລາມັນຢູ່ນັ້ນ, ຈົ່ງເບິ່ງ ຂ້າໃຊ້ຄົນໜຶ່ງຂອງຮີລາມັນໄດ້ປອມຕົວອອກໄປຂ້າງນອກໃນເວລາກາງຄືນ, ສະນັ້ນ ລາວຈຶ່ງໄດ້ຮູ້ຈັກເຖິງແຜນການຊຶ່ງພັກນີ້ວາງຂຶ້ນເພື່ອຈະໄດ້ທຳຮ້າຍຮີລາມັນ—

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າໃຊ້ຂອງຮີລາມັນ ໄດ້ພົບກັບຄິດຄູເມັນ, ແລະ ໄດ້ໃຫ້ສັນຍານແກ່ລາວ; ສະນັ້ນ ຄິດຄູເມັນຈຶ່ງໄດ້ບອກໃຫ້ລາວຮູ້ເຖິງຄວາມປາດຖະໜາຂອງຕົນ, ໂດຍປາດຖະໜາທີ່ຈະໃຫ້ລາວນຳລາວໄປຫາບັນລັງຕັດສິນເພື່ອວ່າລາວຈະໄດ້ລອບຂ້າຮີລາມັນເສຍ.

8 ແລະ ເວລາຂ້າໃຊ້ຂອງຮີລາມັນຮູ້ຈັກ

**2** 3 *ກ* ຮລມ 1:9.

4 *ກ* ຄມພ ພວກໂຈນແກດີອານທັນ.

ເຖິງ ເລື່ອງ ໃນ ໃຈ ຂອງ ຄິດ ຄູ ເມັນ ທັງ ໝົດ,
ແລະ ຮູ້ຈັກເຖິງຈຸດປະສົງຂອງລາວທີ່ຫວັງ
ຈະ ຂ້າ, ແລະ ຮູ້ ຈັກ ອີກ ວ່າ ມັນ ເປັນ ຈຸດ
ປະສົງ ຂອງທຸກຄົນ ທີ່ຢູ່ ໃນ ພັກ ຂອງລາວ
ທີ່ຫວັງຈະຂ້າຄືກັນ, ແລະ ຫວັງທີ່ຈະລັກ,
ແລະ ຫວັງທີ່ຈະຍຶດເອົາອຳນາດ, (ແລະ ນີ້
ເປັນແຜນການ ᵃລັບ, ແລະ ການມົ້ວສຸມລັບ
ຂອງພວກເຂົາ) ຂ້າໃຊ້ຂອງຮີລາມັນເວົ້າ
ກັບຄິດຄູເມັນວ່າ: ໃຫ້ພວກເຮົາໄປຫາບັນ
ລັງຕັດສິນນຳກັນເທາະ.
9 ບັດ ນີ້ ມັນຈຶ່ງ ເຮັດ ໃຫ້ຄິດຄູ ເມັນພໍໃຈ
ຫລາຍທີ່ສຸດ, ເພາະຄິດວ່າລາວຈະໄດ້ຮັບ
ຜົນສຳເລັດຕາມແຜນການທີ່ວາງໄວ້; ແຕ່
ຈົ່ງເບິ່ງ, ໃນຂະນະທີ່ພວກເຂົາກຳລັງເດີນ
ທາງ ໄປ ຫາ ບັນ ລັງ ຕັດ ສິນ ຢູ່ ນັ້ນ, ຂ້າ ໃຊ້
ຂອງຮີລາມັນໄດ້ແທງຄິດຄູເມັນທະລຸຫົວ
ໃຈ ຈົນລາວໄດ້ລົ້ມຕາຍຄາທີ່ໂດຍບໍ່ມີສຽງ
ຮ້ອງຄາງເລີຍ. ແລະ ລາວໄດ້ແລ່ນໄປບອກ
ຮີລາມັນເຖິງເລື່ອງທັງໝົດທີ່ລາວໄດ້ເຫັນ,
ແລະ ໄດ້ຍິນ, ແລະ ໄດ້ເຮັດ.
10 ແລະ ເຫດການ ໄດ້ບັງເກີດຂຶ້ນຄື ຮີ
ລາ ມັນ ຈຶ່ງ ໄດ້ ສົ່ງ ຄົນ ໄປ ຈັບ ພວກ ໂຈນ
ແລະ ກຸ່ມຄາດຕະກອນລັບພວກນີ້, ເພື່ອ
ພວກເຂົາຈະໄດ້ຖືກປະຫານຊີວິດຕາມກົດ
ໝາຍ.
11 ແຕ່ຈົ່ງເບິ່ງ, ເວລາແກດີອານທັນຮູ້ວ່າ
ຄິດຄູເມັນບໍ່ໄດ້ກັບຄືນມາ ລາວກໍຢ້ານວ່າ
ຕົວ ເອງ ຈະຖືກທຳລາຍ; ສະນັ້ນ ລາວ ຈຶ່ງ
ສັ່ງໃຫ້ພັກພວກຂອງລາວຕິດຕາມລາວໄປ.
ແລະ ພວກເຂົາໄດ້ໜີອອກຈາກແຜ່ນດິນ
ໂດຍທາງລັບເຂົ້າໄປໃນຖິ່ນແຫ້ງແລ້ງກັນ
ດານ; ແລະ ເວລາທີ່ຮີລາມັນສົ່ງຄົນໄປຈັບ
ພວກເຂົາ, ຈຶ່ງບໍ່ເຫັນພວກເຂົາໃນບ່ອນໃດ
ເລີຍ.
12 ແລະ ເລື່ອງລາວຂອງແກດີອານທັນ
ຈະ ຖືກເວົ້າເຖິງອີກຫລັງຈາກນີ້ໄປ. ແລະ
ປີທີສີ່ສິບສອງແຫ່ງການປົກຄອງຂອງຜູ້ຕັດ
ສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງ
ນີ້.
13 ແລະ ຈົ່ງເບິ່ງ, ໃນຕອນສຸດທ້າຍຂອງ
ໜັງ ສື ເຫລັ້ມນີ້ ທ່ານຈະ ເຫັນ ໄດ້ວ່າ ᵃແກ
ດີອານທັນຜູ້ນີ້ໄດ້ເປັນຕົ້ນ ເຫດຂອງການ
ໂຄ່ນລົ້ມ, ແທ້ຈິງແລ້ວ, ມັນເກືອບຈະເປັນ
ການ ທຳລາຍຜູ້ຄົນ ຂອງນີໄຟ ໃຫ້ສູນ ສິ້ນ
ໄປ.
14 ຈົ່ງເບິ່ງ ຂ້າພະເຈົ້າບໍ່ໄດ້ໝາຍຄວາມ
ວ່າ ມັນແມ່ນຕອນສຸດທ້າຍຂອງໜັງສື ຮີ
ລາມັນ, ແຕ່ຂ້າພະເຈົ້າໝາຍເຖິງຕອນສຸດ
ທ້າຍຂອງໜັງສືນີໄຟ, ຊຶ່ງຂ້າພະເຈົ້າໄດ້
ເອົາເລື່ອງລາວທັງໝົດມາຂຽນໄວ້.

## ບົດທີ 3

*ຊາວ ນີ ໄຟ ຢ່າງ ຫລວງ ຫລາຍ ອົບ ພະຍົບ ໄປ ຫາ ແຜ່ນ ດິນ ທາງ ເໜືອ—ພວກ ເຂົາ ສ້າງເຮືອນຊານດ້ວຍປູນຊີມັງ ແລະ ຂຽນ ບັນທຶກໄວ້ຫລາຍເລື່ອງ—ຫລາຍໝື່ນຄົນ ໄດ້ ປ່ຽນ ໃຈ ເຫລື້ອມ ໃສ ແລະ ຮັບບັບຕິ ສະມາ—ພຣະ ຄຳ ຂອງ ພຣະ ເຈົ້າ ນຳ ພາ ມະນຸດໄປສູ່ຄວາມລອດ—ນີໄຟລູກຊາຍ ຂອງຮີລາມັນຮັບຕຳແໜ່ງເປັນຜູ້ຕັດສິນ. ປະມານ 49–39 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່
ສິບສາມແຫ່ງການປົກຄອງຂອງຜູ້ຕັດສິນ,
ມັນບໍ່ມີການຂັດແຍ້ງກັນເລີຍໃນບັນດາຜູ້
ຄົນຂອງນີໄຟຍົກເວັ້ນແຕ່ມີຄວາມທະນົງ
ຕົວເລັກໜ້ອຍໃນສາດສະໜາຈັກ, ຊຶ່ງພາ
ໃຫ້ເກີດການແຕກແຍກກັນເລັກໜ້ອຍໃນ

8 *a* 2 ນຟ 10:15.
ຄມພ ການມົ້ວສຸມລັບ.
13 *a* ຮລມ 6:18;
4 ນຟ 1:42.

ບັນດາຜູ້ຄົນ, ຊຶ່ງມັນໄດ້ຢຸດຕິລົງໃນທ້າຍປີ
ທີສີ່ສິບສາມ.
2 ແລະ ມັນບໍ່ມີການຂັດແຍ້ງກັນເລີຍໃນ
ບັນດາຜູ້ຄົນໃນປີທີສີ່ສິບສີ່; ແລະ ທັງບໍ່ມີ
ການຂັດແຍ້ງກັນຫລາຍໃນປີທີສີ່ສິບຫ້າ.
3 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ສີ່ສິບຫົກ, ແທ້ຈິງແລ້ວ, ມັນໄດ້ມີການຂັດ
ແຍ້ງກັນຂຶ້ນຫລາຍພໍສົມຄວນ ແລະ ມີການ
ແຕກແຍກກັນຫລາຍ; ຈຶ່ງເປັນເຫດໃຫ້ຜູ້
ຄົນຈຳນວນຫລວງຫລາຍອອກຈາກແຜ່ນ
ດິນເຊຣາເຮັມລາໄປ, ແລະ ໄດ້ອອກໄປຫາ
ແຜ່ນດິນ [ກ]ທາງເໜືອ ເພື່ອຈະໄດ້ເອົາແຜ່ນ
ດິນພາກນັ້ນເປັນມູນມໍລະດົກ.
4 ແລະ ພວກເຂົາໄດ້ເດີນທາງໄປເປັນ
ໄລຍະໄກທີ່ສຸດ, ເຖິງຂະໜາດທີ່ພວກເຂົາ
ມາຮອດແມ່ນ້ຳອັນ [ກ]ກວ້າງໃຫຍ່ ແລະ ແມ່
ນ້ຳຫລາຍສາຍ.
5 ແທ້ຈິງແລ້ວ, ພວກເຂົາໄດ້ກະຈັດກະ
ຈາຍກັນອອກໄປທົ່ວແຜ່ນດິນພາກນັ້ນ,
ແລະ ໄດ້ເຂົ້າໄປເອົາທີ່ດິນສ່ວນຕ່າງໆທີ່
ຍັງບໍ່ມີເຈົ້າຂອງ ຊຶ່ງຖືກປະໄວ້ໃຫ້ຮົກຮ້າງ
ແລະ ປາດສະຈາກຕົ້ນໄມ້, ຍ້ອນວ່າມັນ
ເຄີຍມີຜູ້ອາໄສເປັນຈຳນວນຫລວງຫລາຍ
ຢູ່ໃນແຜ່ນດິນນີ້ມາກ່ອນແລ້ວ.
6 ແລະ ບັດນີ້ແຜ່ນດິນນີ້ບໍ່ໄດ້ຮົກຮ້າງອີກ
ແລ້ວ, ເວັ້ນເສຍແຕ່ມັນບໍ່ມີຕົ້ນໄມ້; ຍ້ອນວ່າ
[ກ]ຄວາມພິນາດອັນໃຫຍ່ຫລວງຂອງຜູ້ຄົນຜູ້
ເຄີຍອາໄສຢູ່ໃນແຜ່ນດິນນີ້ມາກ່ອນ ມັນຈຶ່ງ
ຖືກເອີ້ນວ່າ [ຂ]ແຜ່ນດິນຮ້າງ.
7 ແລະ ມັນມີຕົ້ນໄມ້ຢູ່ພຽງເລັກໜ້ອຍໃນ
ແຜ່ນດິນ, ເຖິງຢ່າງໃດກໍຕາມ ຜູ້ຄົນທີ່ເຂົ້າ
ມາຢູ່ໃນແຜ່ນດິນນີ້ເປັນຜູ້ທີ່ຊຳນິຊຳນານ
ໃນການເຮັດປູນຊີມັງ; ສະນັ້ນ ພວກເຂົາຈຶ່ງ
ໄດ້ສ້າງເຮືອນຊານຂຶ້ນດ້ວຍປູນຊີມັງ, ເພື່ອ
ເປັນບ່ອນພັກພາອາໄສ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ເພີ່ມທະວີຂຶ້ນ, ແລະ ຂະຫຍາຍ
ອອກໄປ ແລະ ໄດ້ແຜ່ຂະຫຍາຍອອກໄປ
ຈາກແຜ່ນດິນທາງໃຕ້ ເຖິງແຜ່ນດິນທາງ
ເໜືອ, ແລະ ພວກເຂົາເລີ່ມແຜ່ຂະຫຍາຍ
ເຖິງຂະໜາດທີ່ພວກເຂົາເລີ່ມຕົ້ນປົກຄຸມ
ທົ່ວພື້ນແຜ່ນດິນໂລກ, ຈາກທະເລທາງໃຕ້
ເຖິງທະເລທາງເໜືອ, ຈາກ [ກ]ທະເລທາງຕາ
ເວັນຕົກເຖິງທະເລທາງຕາເວັນອອກ.
9 ແລະ ຜູ້ຄົນຜູ້ທີ່ຢູ່ໃນແຜ່ນດິນທາງ
ເໜືອໄດ້ອາໄສຢູ່ໃນຜ້າເຕັ້ນ, ແລະ ເຮືອນ
ຊານທີ່ເຮັດດ້ວຍປູນຊີມັງ, ແລະ ພວກເຂົາ
ໄດ້ປ່ອຍໃຫ້ຕົ້ນໄມ້ບໍ່ວ່າຊະນິດໃດໆກໍຕາມ
ເຕີບໂຕຂຶ້ນ ເພື່ອວ່າພວກເຂົາຈະໄດ້ມີໄມ້
ໄວ້ສ້າງເຮືອນຊານຂອງພວກເຂົາເວລາ
ມັນໃຫຍ່ຂຶ້ນມາ, ແທ້ຈິງແລ້ວ, ເພື່ອພວກ
ເຂົາຈະໄດ້ສ້າງບ້ານເມືອງຂອງພວກເຂົາ,
ແລະ ພຣະວິຫານຂອງພວກເຂົາ, ແລະ
ບ່ອນລີ້ໄພຂອງພວກເຂົາ, ແລະ ທຳມະສາ
ລາຂອງພວກເຂົາ, ແລະ ອາຄານຕ່າງໆ
ຂອງພວກເຂົາຂຶ້ນ.
10 ແລະ ເຫດການໄດ້ບັງເກີດຂຶ້ນເນື່ອງ
ຈາກວ່າຕົ້ນໄມ້ໃນແຜ່ນດິນທາງເໜືອຫາ
ຍາກຫລາຍ, ຜູ້ຄົນຢູ່ທາງໃຕ້ຈຶ່ງໄດ້ສົ່ງໄມ້
ຢ່າງຫລວງຫລາຍຂຶ້ນໄປ [ກ]ທາງເຮືອ.
11 ດັ່ງນັ້ນ ພວກເຂົາຈຶ່ງສາມາດຊ່ວຍຜູ້
ຄົນຜູ້ອາໄສຢູ່ໃນແຜ່ນດິນທາງເໜືອສ້າງ
ບ້ານເມືອງຂຶ້ນ, ທັງເຮັດດ້ວຍໄມ້ ແລະ
ດ້ວຍປູນຊີມັງ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
[ກ]ຜູ້ຄົນຂອງອຳໂມນຈຳນວນຫລາຍຊຶ່ງເປັນ

---

**3** 3 *ກ* ແອວ 63:4.
4 *ກ* ມຊຢ 8:8; ມມ 6:4.
6 *ກ* ມຊຢ 21:25–27. *ຂ* ແອວ 22:31.
8 *ກ* ແອວ 22:27, 32.
10 *ກ* ແອວ 63:5–8.
12 *ກ* ແອວ 27:21–26.

ຊາວ ເລມັນ ໂດຍ ກຳເນີດ, ໄດ້ ຂຶ້ນ ໄປ ຫາ
ແຜ່ນດິນນີ້ຄືກັນ.
13 ແລະ ບັດ ນີ້ ມີ ບັນ ທຶກ ຫລາຍ ສະບັບ
ທີ່ຫລາຍຄົນ ໃນ ຜູ້ຄົນ ພວກ ນີ້ ຂຽນ ໄວ້ ເຖິງ
ການ ກະທຳ ຂອງ ຜູ້ຄົນ ພວກ ນີ້, ຊຶ່ງ ເປັນ
ເລື່ອງທີ່ຍືດຍາວກ່ຽວກັບພວກເຂົາເອງ.
14 ແຕ່ຈົ່ງ ເບິ່ງ, ຂ້າພະເຈົ້າ ໄດ້ກ່າວ ໄວ້
ພຽງແຕ່ໜຶ່ງສ່ວນຮ້ອຍເທົ່ານັ້ນຂອງການກະ
ທຳຂອງຜູ້ຄົນພວກນີ້, ແທ້ຈິງແລ້ວ, ເລື່ອງ
ລາວ ຂອງ ຊາວ ເລມັນ ແລະ ເລື່ອງ ລາວ
ຂອງຊາວ ນີໄຟ, ແລະ ສົງຄາມ ຂອງ ພວກ
ເຂົາ, ແລະ ການ ຂັດ ແຍ້ງ ຂອງ ພວກ ເຂົາ,
ແລະ ການ ແຕກແຍກ ຂອງ ພວກ ເຂົາ, ແລະ
ການ ສັ່ງສອນ ຂອງ ພວກ ເຂົາ, ແລະ ການ
ທຳນາຍ ຂອງ ພວກ ເຂົາ, ແລະ ການ ຂົນສົ່ງ
ທາງນ້ຳ ຂອງ ພວກ ເຂົາ ແລະ ການສ້າງເຮືອ
ໃຫຍ່ຂອງພວກເຂົາ, ແລະ ການສ້າງ [ກ]ພຣະ
ວິຫານຂອງພວກເຂົາ, ແລະ ການສ້າງບ່ອນ
ລີ້ໄພ ແລະ ທຳມະສາລາ ຂອງ ພວກ ເຂົາ,
ແລະ ຄວາມຊອບທຳຂອງພວກເຂົາ, ແລະ
ຄວາມຊົ່ວຮ້າຍ ຂອງ ພວກເຂົາ, ແລະ ການ
ຄາດຕະກຳ ຂອງ ພວກເຂົາ, ແລະ ການລັກ
ຂະ ໂມຍ ຂອງ ພວກ ເຂົາ, ແລະ ການປຸ້ນຈີ້
ຂອງ ພວກ ເຂົາ, ແລະ ຄວາມ ໜ້າກຽດ ຊັງ
ແລະ ການ ໂສເພນີ ຂອງ ພວກ ເຂົາ, ບໍ່ສາ
ມາດ ຈະ ເອົາມາບັນຈຸ ໄວ້ ໃນໜັງສືເຫລັ້ມນີ້
ໄດ້.
15 ແຕ່ຈົ່ງເບິ່ງ, ມັນມີໜັງສືຫລາຍເຫລັ້ມ
ແລະ ບັນທຶກຫລາຍສະບັບຂອງທຸກແບບ,
ແລະ ສ່ວນ ໃຫຍ່ນັ້ນແມ່ນຊາວ ນີໄຟເປັນຜູ້
ຮັກສາໄວ້.
16 ແລະ ຊາວ ນີໄຟ ໄດ້ ມອບ ສິ່ງ ເຫລົ່ານີ້
[ກ]ຕໍ່ໆກັນໄປຈາກຄົນລຸ້ນໜຶ່ງຫາຄົນອີກລຸ້ນ
ໜຶ່ງ, ຈົນ ວ່າມາຮອດ ເວລາ ພວກ ເຂົາ ຕົກ
ໄປສູ່ການລ່ວງລະເມີດ ແລະ ມີການຄາດ
ຕະກຳ, ການປຸ້ນຈີ້, ແລະ ການຕາມລ່າ,
ແລະ ການຂັບໄລ່, ແລະ ການຂ້າຟັນ, ແລະ
ການແຕກກະຈັດກະຈາຍໄປທົ່ວຜືນແຜ່ນ
ດິນໂລກ, ແລະ ປະປົນເຂົ້າກັບຊາວເລມັນ
ຈົນວ່າພວກເຂົາບໍ່ໄດ້ຖືກເອີ້ນວ່າຊາວນີໄຟ
[ຂ]ອີກ ຕໍ່ ໄປ, ກາຍ ເປັນ ຄົນ ຊົ່ວ, ແລະ ປ່າ
ເຖື່ອນ, ແລະ ຮ້າຍກາດ, ແທ້ຈິງແລ້ວ, ໄດ້
ກາຍເປັນຊາວເລມັນ.
17 ແລະ ບັດນີ້ຂ້າພະເຈົ້າຈະກັບມາເວົ້າ
ເຖິງ ເລື່ອງ ຂອງ ຂ້າ ພະ ເຈົ້າອີກ; ສະນັ້ນ,
ສິ່ງທີ່ຂ້າພະເຈົ້າເວົ້າມານີ້ໄດ້ເກີດຂຶ້ນແລ້ວ
ຫລັງ ຈາກມີການ ຂັດ ແຍ້ງ, ແລະ ມີຄວາມ
ຫຍຸ້ງຍາກ, ແລະ ສົງຄາມ, ແລະ ການແຕກ
ແຍກຢ່າງໃຫຍ່ຫລວງໃນບັນດາຜູ້ຄົນຂອງ
ນີໄຟ.
18 ປີທີສີ່ສິບຫົກແຫ່ງການປົກຄອງຂອງ
ຜູ້ຕັດສິນໄດ້ສິ້ນສຸດລົງ;
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ຍັງມີການຂັດແຍ້ງອັນໃຫຍ່ຫລວງເກີດຂຶ້ນ
ໃນແຜ່ນດິນຢູ່, ແທ້ຈິງແລ້ວ, ເຖິງແມ່ນໃນ
ປີທີສີ່ສິບເຈັດ ແລະ ປີທີສີ່ສິບແປດນຳອີກ.
20 ເຖິງຢ່າງ ໃດກໍຕາມ ຮີລາມັນຍັງໄດ້
ເຮັດໜ້າທີ່ຢູ່ເທິງບັນລັງຕັດສິນດ້ວຍຄວາມ
ຍຸດ ຕິ ທຳ ແລະ ຄວາມ ຊອບ ທຳ; ແທ້ ຈິງ
ແລ້ວ, ເພິ່ນໄດ້ຍຶດຖືທີ່ຈະຮັກສາຂໍ້ກຳນົດ,
ແລະ ການພິພາກສາ, ແລະ ພຣະບັນຍັດ
ຂອງພຣະເຈົ້າ; ແລະ ເພິ່ນໄດ້ເຮັດທຸກສິ່ງ
ທຸກຢ່າງທີ່ຖືກຕ້ອງໃນສາຍພຣະເນດຂອງ
ພຣະເຈົ້າຕະຫລອດເວລາ; ແລະ ເພິ່ນໄດ້
ໃຊ້ຊີວິດຕາມ ແບບ ຢ່າງຂອງບິດາຂອງ
ເພິ່ນ, ເຖິງຂະໜາດທີ່ເພິ່ນໄດ້ຮຸ່ງເຮືອງຢູ່
ໃນແຜ່ນດິນ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ

14 *ກ* 2 ນຟ 5:16; ຢຄ 1:17; 3 ນຟ 11:1.
16 *ກ* 1 ນຟ 5:16–19; ແອວ 37:4.
*ຂ* ແອວ 45:12–14.

ມີລູກຊາຍສອງຄົນ. ເພິ່ນໄດ້ຕັ້ງຊື່ໃຫ້ລູກກົກ ວ່າ [ກ]ນີໄຟ, ແລະ ຜູ້ຫລ້າວ່າ [ຂ]ລີໄຮ. ແລະ ພວກເຂົາທັງສອງເລີ່ມເຕີບໂຕຂຶ້ນໃນທາງຂອງພຣະຜູ້ເປັນເຈົ້າ.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ສົງຄາມ ແລະ ການຂັດແຍ້ງກັນເລີ່ມຢຸດລົງແດ່ແລ້ວ, ໃນລະດັບໜ້ອຍໜຶ່ງ, ໃນບັນດາຜູ້ຄົນຂອງນີໄຟ, ໃນທ້າຍປີທີສີ່ສິບແປດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.

23 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບເກົ້າແຫ່ງການປົກຄອງຂອງຜູ້ຕັດສິນ, ມັນໄດ້ມີສັນຕິສຸກຕໍ່ເນື່ອງກັນໄປໃນແຜ່ນດິນ, ນອກຈາກການມົ້ວສຸມລັບ ຊຶ່ງໂຈນ [ກ]ແກດີອານທັນຈັດຕັ້ງຂຶ້ນ ໃນພາກສ່ວນຕ່າງໆຂອງແຜ່ນດິນທີ່ມີຜູ້ຄົນພັກພາອາໄສຢູ່, ຊຶ່ງໃນເວລານັ້ນ ຜູ້ທີ່ເປັນຜູ້ນຳຂອງຝ່າຍປົກຄອງບໍ່ຮູ້ຈັກຫຍັງເລີຍ; ສະນັ້ນ ພວກເຂົາຈຶ່ງບໍ່ໄດ້ຖືກທຳລາຍໄປຈາກແຜ່ນດິນ.

24 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີດຽວກັນນີ້ ມັນມີຄວາມຈະເລີນຮຸ່ງເຮືອງຫລາຍທີ່ສຸດໃນສາດສະໜາຈັກ, ເຖິງຂະໜາດທີ່ມີຫລາຍພັນຄົນເຂົ້າມາຮ່ວມສາດສະໜາຈັກ ແລະ ໄດ້ຮັບບັບຕິສະມາໄວ້ກັບການກັບໃຈ.

25 ແລະ ຄວາມຈະເລີນຮຸ່ງເຮືອງຂອງສາດສະໜາຈັກນັ້ນກວ້າງຂວາງຫລາຍຂຶ້ນ, ແລະ ພອນຢ່າງຫລວງຫລາຍໄດ້ຖືກຖອກເທລົງມາເທິງຜູ້ຄົນ, ຈົນວ່າມະຫາປະໂລຫິດ ແລະ ຄູສອນເອງແປກໃຈເກີນກວ່າທີ່ຈະຄຳນວນໄດ້.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ວຽກງານຂອງພຣະຜູ້ເປັນເຈົ້າໄດ້ຈະເລີນຮຸ່ງເຮືອງຂຶ້ນ ຈົນນຳຄົນຢ່າງຫລວງຫລາຍມາຫາການຮັບບັບຕິສະມາ ແລະ ເປັນອັນໜຶ່ງອັນດຽວກັນກັບສາດສະໜາຈັກຂອງພຣະເຈົ້າ, ແທ້ຈິງແລ້ວ, ເຖິງແມ່ນເປັນຫລາຍໝື່ນຄົນ.

27 ດັ່ງນັ້ນ ພວກເຮົາຈຶ່ງເຫັນໄດ້ວ່າ ພຣະຜູ້ເປັນເຈົ້າເມດຕາປານີຕໍ່ທຸກໆຄົນທີ່ເອີ້ນຫາພຣະນາມອັນສັກສິດຂອງພຣະອົງດ້ວຍຄວາມຈິງໃຈຂອງໃຈເຂົາ.

28 ແທ້ຈິງແລ້ວ, ພວກເຮົາຈຶ່ງເຫັນໄດ້ວ່າ [ກ]ປະຕູສະຫວັນໄດ້ເປີດໃຫ້ແກ່ [ຂ]ທຸກຄົນຜູ້ທີ່ເຊື່ອໃນພຣະນາມຂອງພຣະເຢຊູຄຣິດຜູ້ເປັນພຣະບຸດຂອງພຣະເຈົ້າ.

29 ແທ້ຈິງແລ້ວ, ພວກເຮົາຈຶ່ງເຫັນໄດ້ວ່າ ຜູ້ໃດກໍຕາມທີ່ຕັ້ງໃຈຍຶດຖື [ກ]ພຣະຄຳຂອງພຣະເຈົ້າ, ຊຶ່ງ [ຂ]ມີຊີວິດ ແລະ ມີພະລັງ, ຊຶ່ງຈະແຍກເລ່ຫລ່ຽມ ແລະ ບ້ວງ ແລະ ກົນອຸບາຍຂອງມານອອກໄປ, ແລະ ນຳເອົາຄົນຂອງພຣະຄຣິດໄປໃນທາງຄັບ ແລະ [ຄ]ແຄບ ຂ້າມ [ງ]ເຫວເລິກແຫ່ງຄວາມທຸກທໍລະມານອັນເປັນນິດ ຊຶ່ງຕຽມໄວ້ໃຫ້ກືນຄົນຊົ່ວ—

30 ແລະ ຈະນຳເອົາຈິດວິນຍານຂອງພວກເຂົາມາວາງໄວ້, ແທ້ຈິງແລ້ວ, ແມ່ນຈິດວິນຍານທີ່ເປັນອະມະຕະຂອງພວກເຂົາ ມາວາງໄວ້ ທາງ [ກ]ເບື້ອງຂວາພຣະຫັດຂອງພຣະເຈົ້າໃນອານາຈັກສະຫວັນ, ເພື່ອນັ່ງຢູ່ຮ່ວມກັບອັບຣາຮາມ, ແລະ ກັບອີຊາກ, ແລະ ກັບຢາໂຄບ, ແລະ ກັບບັນ

21 ກ ຄມພ ນີໄຟ, ລູກຊາຍຂອງຮີລາມັນ.
ຂ ຄມພ ລີໄຮ, ຜູ້ສອນສາດສະໜາຊາວນີໄຟ.
23 ກ ຮລມ 2:4.
28 ກ 2 ນຟ 31:9, 17.
ຂ ກຈກ 10:28; ຣມ 2:10–11.
29 ກ ຄມພ ພຣະຄຳຂອງພຣະເຈົ້າ.
ຂ ຮຮ 4:12; ຄພ 11:2.
ຄ 2 ນຟ 9:41; 33:9.
ງ 1 ນຟ 15:28–30.
30 ກ ມທ 25:33–34.

ພະບຸລຸດຜູ້ບໍລິສຸດທັງຫລາຍຂອງພວກເຮົາ
ເພື່ອຈະບໍ່ອອກໄປອີກ.
31 ແລະ ໃນປີນີ້ ມັນຍັງມີຄວາມຊື່ນຊົມ
ຢູ່ໃນແຜ່ນດິນເຊຣາເຮັມລາ, ແລະ ໃນທຸກ
ພາກພື້ນໂດຍອ້ອມຮອບ ເຖິງແມ່ນໃນທົ່ວ
ແຜ່ນດິນທີ່ຊາວນີໄຟເປັນເຈົ້າຂອງ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ໄດ້ມີສັນຕິສຸກ ແລະ ຄວາມຊື່ນຊົມຢ່າງລົ້ນ
ເຫລືອໃນເວລາທີ່ເຫລືອຢູ່ຂອງປີທີສີ່ສິບ
ເກົ້າ; ແທ້ຈິງແລ້ວ, ມັນໄດ້ມີສັນຕິສຸກ ແລະ
ຄວາມຜາສຸກຕໍ່ເນື່ອງກັນໄປອີກໃນປີທີຫ້າ
ສິບແຫ່ງການປົກຄອງຂອງຜູ້ຕັດສິນ.
33 ແລະ ໃນປີທີຫ້າສິບເອັດແຫ່ງການ
ປົກຄອງຂອງຜູ້ຕັດສິນກໍຍັງມີສັນຕິສຸກຢູ່
ນອກຈາກມີຄວາມທະນົງຕົວຊຶ່ງເລີ່ມເຂົ້າ
ມາໃນສາດສະໜາຈັກ—ບໍ່ແມ່ນເຂົ້າມາໃນ
ສາດສະໜາຈັກຂອງພຣະເຈົ້າ, ແຕ່ເຂົ້າມາ
ໃນໃຈຂອງຜູ້ທີ່ອ້າງວ່າເປັນຂອງສາດສະ
ໜາຈັກຂອງພຣະເຈົ້າ—
34 ແລະ ພວກເຂົາໄດ້ລະເມີເພີ້ຝັນດ້ວຍ
[ກ]ຄວາມທະນົງຕົວ, ຈົນວ່າພວກເຂົາໄດ້ກົດ
ຂີ່ຂົ່ມເຫັງພີ່ນ້ອງຂອງຕົນຫລາຍຄົນ. ບັດນີ້
ນີ້ເປັນຄວາມຊົ່ວອັນໃຫຍ່ຫລວງຊຶ່ງໄດ້ເຮັດ
ໃຫ້ຜູ້ຄົນທີ່ຖ່ອມຕົວເປັນຈຳນວນຫລວງ
ຫລາຍຕ້ອງທົນທຸກຕໍ່ການກົດຂີ່ຂົ່ມເຫັງ
ນັ້ນ, ແລະ ຕ້ອງລຸຍໄປກັບຄວາມທຸກຢ່າງ
ຫລວງຫລາຍ.
35 ເຖິງ ຢ່າງ ໃດ ກໍ ຕາມ ພວກ ເຂົາ ຍັງ
ໄດ້ [ກ]ຖືສິນອົດເຂົ້າ ແລະ [ຂ]ອະທິຖານຢູ່
ເລື້ອຍໆ ແລະ ໄດ້ເຂັ້ມແຂງຂຶ້ນໄປເລື້ອຍໆ
ໃນ [ຄ]ຄວາມຖ່ອມຕົວຂອງພວກເຂົາ, ແລະ
ໝັ້ນຄົງຂຶ້ນໄປເລື້ອຍໆນຳສັດທາໃນພຣະ
ຄຣິດ, ຈົນເຮັດໃຫ້ຈິດວິນຍານຂອງພວກ
ເຂົາເຕັມໄປດ້ວຍຄວາມສຸກ ແລະ ຄວາມ
ປອບໃຈ, ແທ້ຈິງແລ້ວ, ຈົນ [ງ]ຊຳລະໃຈຂອງ
ພວກເຂົາ [ຈ]ໃຫ້ບໍລິສຸດ ແລະ ສັກສິດ ຊຶ່ງ
ການຊຳລະໃຫ້ບໍລິສຸດນັ້ນມີມາຍ້ອນການ
[ສ]ຍອມຖວາຍໃຈຂອງພວກເຂົາແດ່ພຣະ
ເຈົ້າ.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີ
ຫ້າສິບສອງໄດ້ສິ້ນສຸດລົງດ້ວຍສັນຕິສຸກຄື
ກັນ, ນອກຈາກຄວາມທະນົງຕົວອັນໃຫຍ່
ຫລວງໄດ້ເຂົ້າເຖິງໃຈຂອງຜູ້ຄົນ; ແລະ ມັນ
ເປັນຍ້ອນ [ກ]ຄວາມຮັ່ງມີເປັນດີ ແລະ ຄວາມ
ຈະເລີນຮຸ່ງເຮືອງຢ່າງຍິ່ງໃນແຜ່ນດິນຂອງ
ພວກເຂົາ; ແລະ ນັບມື້ນັບວັນມັນໄດ້ເຕີບ
ໂຕຂຶ້ນຢູ່ໃນພວກເຂົາ.
37 ແລະ ເຫດການໄດ້ບັງເກີດຂຶ້ນໃນປີ
ທີຫ້າສິບສາມແຫ່ງການປົກຄອງຂອງຜູ້ຕັດ
ສິນ, ຮີລາມັນໄດ້ສິ້ນຊີວິດໄປ, ແລະ ລູກ
ຊາຍກົກຂອງເພິ່ນ ນີໄຟ ໄດ້ຂຶ້ນເປັນຜູ້ຕັດ
ສິນແທນ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ເພິ່ນໄດ້ເຮັດໜ້າທີ່ໃນບັນລັງຕັດສິນດ້ວຍ
ຄວາມຍຸດຕິທຳ ແລະ ຄວາມທ່ຽງທຳ; ແທ້
ຈິງແລ້ວ, ເພິ່ນໄດ້ຮັກສາພຣະບັນຍັດຂອງ
ພຣະເຈົ້າ, ແລະ ໄດ້ເດີນໃນເສັ້ນທາງຂອງ
ບິດາຂອງເພິ່ນ.

## ບົດທີ 4

*ຜູ້ທີ່ແຍກອອກໄປຈາກຊາວນີໄຟໄດ້ຮ່ວມ
ກຳລັງເຂົ້າກັບຊາວເລມັນ ແລະ ຍຶດເອົາ*

34 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
35 *ກ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຄ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ງ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຈ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ສ* 2 ຂຄ 30:8; ມຊຢ 3:19.
36 *ກ* ຄມພ ຮັ່ງມີ, ຄວາມຮັ່ງມີ.

*ເຊຣາ ເຮັມລາ ໄປ—ຊາວ ນີໄຟ ເສຍ ໄຊ ເພາະ ຄວາມ ຊົ່ວ ຮ້າຍ ຂອງ ພວກ ເຂົາ—ສາດສະໜາຈັກເສື່ອມໂຊມລົງ ແລະ ຜູ້ຄົນກັບກາຍມາເປັນຄົນອ່ອນແອຄືກັນກັບຊາວເລມັນ. ປະມານ 38–30 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫ້າສິບສີ່ຄື ມັນມີການແຕກແຍກຂຶ້ນຫລາຍໃນສາດສະໜາຈັກ, ແລະ ມີ [ກ]ການຂັດແຍ້ງກັນໃນບັນດາຜູ້ຄົນນຳອີກ, ເຖິງຂະໜາດທີ່ມີການນອງເລືອດຢ່າງໜັກເກີດຂຶ້ນ.

2 ແລະ ຝ່າຍພວກກະບົດບາງສ່ວນຖືກຂ້າ ແລະ ຖືກຂັບໄລ່ອອກໄປຈາກແຜ່ນດິນ, ແລະ ພວກເຂົາໄດ້ໄປຫາກະສັດຂອງຊາວເລມັນ.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຍຸຍົງຊາວເລມັນໃຫ້ມາເຮັດເສິກກັບຊາວນີໄຟ; ແຕ່ຈົ່ງເບິ່ງ, ຊາວເລມັນມີຄວາມຢ້ານກົວຫລາຍທີ່ສຸດ, ເຖິງຂະໜາດທີ່ພວກເຂົາບໍ່ຍອມເຊື່ອຟັງຄຳເວົ້າຂອງພວກທີ່ແຍກອອກໄປນັ້ນ.

4 ແຕ່ເຫດການໄດ້ບັງເກີດຂຶ້ນໃນປີທີຫ້າສິບຫົກແຫ່ງການປົກຄອງຂອງຜູ້ຕັດສິນ, ມັນໄດ້ມີ [ກ]ຜູ້ຄົນຜູ້ທີ່ແຍກອອກຈາກຊາວນີໄຟໄປຫາຊາວເລມັນ; ແລະ ພວກເຂົາໄດ້ຮັບຄວາມສຳເລັດໃນການຍຸຍົງໃຫ້ຜູ້ອື່ນຄຽດແຄ້ນໃຫ້ຊາວນີໄຟ; ແລະ ພວກເຂົາໄດ້ຕຽມເຮັດເສິກຕະຫລອດປີ.

5 ແລະ ໃນປີທີຫ້າສິບເຈັດ ພວກເຂົາໄດ້ຍົກທັບລົງມາສູ້ຮົບກັບຊາວນີໄຟ, ແລະ ພວກເຂົາໄດ້ເລີ່ມວຽກງານແຫ່ງຄວາມຕາຍ; ແທ້ຈິງແລ້ວ, ເຖິງຂະໜາດທີ່ໃນປີທີຫ້າສິບແປດແຫ່ງການປົກຄອງຂອງຜູ້ຕັດສິນ ພວກເຂົາໄດ້ຮັບຄວາມສຳເລັດໃນການເຂົ້າຄອບຄອງແຜ່ນດິນເຊຣາເຮັມລາ; ແທ້ຈິງແລ້ວ, ແລະ ແຜ່ນດິນທັງໝົດລວມທັງແຜ່ນດິນທີ່ຢູ່ໃກ້ກັບແຜ່ນດິນອຸດົມສົມບູນ.

6 ແລະ ຊາວນີໄຟພ້ອມທັງກອງທັບຂອງໂມໂຣໄນຮາຖືກຂັບໄລ່ເຂົ້າໄປໃນແຜ່ນດິນອຸດົມສົມບູນ;

7 ແລະ ບ່ອນນັ້ນຊາວນີໄຟໄດ້ສ້າງຄ້າຍຂຶ້ນເພື່ອຕ້ານທານຊາວເລມັນ, ຈາກທະເລທາງຕາເວັນຕົກຈົນເຖິງທາງຕາເວັນອອກ; ຊຶ່ງເປັນການເດີນທາງມື້ໜຶ່ງສຳລັບຊາວນີໄຟ, ຕາມເສັ້ນທາງຊຶ່ງພວກເຂົາໄດ້ເສີມກຳລັງ ແລະ ວາງກຳລັງທັບຂອງພວກເຂົາໄວ້ເພື່ອປ້ອງກັນປະເທດຊາດຂອງພວກເຂົາໃນທາງເໜືອ.

8 ແລະ ພວກທີ່ແຍກອອກໄປຈາກຊາວນີໄຟນັ້ນໄດ້ຮັບຄວາມຊ່ວຍເຫລືອຈາກກອງທັບອັນມີກຳລັງຢ່າງຫລວງຫລາຍຈາກຊາວເລມັນ, ດັ່ງນັ້ນ ພວກເຂົາຈຶ່ງໄດ້ຍຶດເອົາແຜ່ນດິນຂອງຊາວນີໄຟທີ່ຢູ່ທາງໃຕ້ໄປໝົດ. ແລະ ທັງໝົດນີ້ເກີດຂຶ້ນໃນປີທີຫ້າສິບແປດ ແລະ ປີຫ້າສິບເກົ້າແຫ່ງການປົກຄອງຂອງຜູ້ຕັດສິນ.

9 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫົກສິບແຫ່ງການປົກຄອງຂອງຜູ້ຕັດສິນ, ໂມໂຣໄນຮາ ແລະ ກຳລັງຂອງເພິ່ນໄດ້ຮັບຄວາມສຳເລັດໃນການຍຶດເອົາແຜ່ນດິນພາກສ່ວນຕ່າງໆຄືນມາ; ແທ້ຈິງແລ້ວ, ພວກເຂົາໄດ້ຍຶດເອົາຫລາຍຫົວເມືອງຊຶ່ງຕົກຢູ່ໃນກຳມືຂອງຊາວເລມັນຄືນມາ.

10 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫົກສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນ ພວກເຂົາໄດ້ຮັບຄວາມສຳເລັດໃນການຍຶດແຜ່ນດິນ ຈົນວ່າພວກເຂົາໄດ້ຍຶດ

**4** 1 *ກ* 3 ນຟ 11:29.

4 *ກ* ຮລມ 5:17.

ເອົາ ເຄິ່ງໜຶ່ງຂອງ ແຜ່ນດິນ ທັງໝົດ ທີ່ ເສຍ
ໄປນັ້ນຄືນມາ.
11 ບັດນີ້ການສູນເສຍຢ່າງຫລວງຫລາຍ
ຂອງ ຊາວ ນີໄຟ ເທື່ອນີ້ ແລະ ການ ຂ້າ ຟັນ
ຍິ່ງໃຫຍ່ທີ່ໄດ້ເກີດຂຶ້ນໃນບັນດາພວກເຂົາ
ຊຶ່ງມັນຈະບໍ່ເກີດຂຶ້ນເລີຍຖ້າຫາກມັນບໍ່ເປັນ
ຍ້ອນຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດ
ຊັງຂອງພວກເຂົາ ຊຶ່ງມີຢູ່ໃນບັນດາພວກ
ເຂົາເອງ; ແທ້ຈິງແລ້ວ, ມັນຢູ່ໃນບັນດາຜູ້
ຄົນທີ່ອ້າງຕົນເອງວ່າເປັນຂອງສາດສະໜາ
ຈັກຂອງພຣະເຈົ້າ.
12 ແລະ ມັນ ເປັນ ຍ້ອນ [ກ]ຄວາມ ທະນົງ
ໃຈຂອງພວກເຂົາ, ເປັນຍ້ອນ [ຂ]ຄວາມຮັ່ງມີ
ເປັນດີຢ່າງຍິ່ງຂອງພວກເຂົາ, ແທ້ຈິງແລ້ວ,
ມັນເປັນຍ້ອນການກົດຂີ່ຂົ່ມເຫັງຂອງພວກ
ເຂົາທີ່ມີຕໍ່ຄົນ [ຄ]ທຸກຍາກລຳບາກ, ກັກກັນ
ອາຫານຈາກຄົນອຶດຫິວ, ບໍ່ມອບເຄື່ອງນຸ່ງ
ຫົ່ມໃຫ້ຜູ້ທີ່ເປືອຍເປົ່າ, ແລະ ຕົບໜ້າພີ່ນ້ອງ
ຂອງຕົນຜູ້ທີ່ຖ່ອມຕົວ, ເວົ້າເຍາະເຍີ້ຍສິ່ງ
ທີ່ສັກສິດ, ປະຕິເສດວິນຍານແຫ່ງການທຳ
ນາຍ ແລະ ການເປີດເຜີຍ, ກໍ່ການຄາດຕະ
ກຳ, ປຸ້ນຈີ້, ເວົ້າຕົວະ, ຂີ້ລັກມັກສົກ, ຫລິ້ນ
ຊູ້, ຂັດແຍ້ງກັນຂຶ້ນຢ່າງຮຸນແຮງ, ແລະ ປົບ
ໜີໄປຫາແຜ່ນດິນນີໄຟໃນບັນດາຊາວ
ເລມັນ—
13 ແລະ ເປັນ ຍ້ອນ ຄວາມ ຊົ່ວ ຮ້າຍ ອັນ
ໃຫຍ່ ຫລວງນີ້, ແລະ [ກ]ການອວດອ້າງໃນ
ກຳລັງຂອງພວກເຂົາເອງ, ພວກເຂົາຈຶ່ງຖືກ
ປະຖິ້ມໃຫ້ຢູ່ກັບກຳລັງຂອງຕົນເອງ; ສະນັ້ນ
ພວກເຂົາຈຶ່ງບໍ່ຈະເລີນຮຸ່ງເຮືອງ ແລະ ກັບ
ມາເປັນຄົນເປັນທຸກ ແລະ ຖືກທຸບຕີ, ຖືກ
ຂັບໄລ່ອອກໄປຕໍ່ໜ້າຊາວເລມັນ, ຈົນວ່າ
ຕ້ອງເສຍຄວາມເປັນເຈົ້າຂອງແຜ່ນດິນ
ຂອງຕົນເອງທັງໝົດໄປ.
14 ແຕ່ຈົ່ງເບິ່ງ, ໂມໂຣໄນຮາໄດ້ສັ່ງສອນ
ຜູ້ຄົນຫລາຍເລື່ອງເຖິງຄວາມຊົ່ວຮ້າຍຂອງ
ພວກເຂົາ, ແລະ [ກ]ນີໄຟກັບລີໄຮຜູ້ຊຶ່ງເປັນ
ລູກຊາຍຂອງຮີລາມັນກໍໄດ້ສັ່ງສອນຜູ້ຄົນ
ຫລາຍເລື່ອງຄືກັນ, ແທ້ຈິງແລ້ວ, ພວກເພິ່ນ
ໄດ້ທຳນາຍຫລາຍເລື່ອງແກ່ພວກເຂົາກ່ຽວ
ກັບຄວາມຊົ່ວຮ້າຍຂອງພວກເຂົາ, ແລະ
ສິ່ງທີ່ຈະເກີດຂຶ້ນກັບພວກເຂົາ ຖ້າຫາກ
ພວກເຂົາບໍ່ກັບໃຈຈາກບາບຂອງພວກ
ເຂົາ.
15 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ກັບໃຈ, ແລະ ຕາບໃດທີ່ພວກ
ເຂົາໄດ້ກັບໃຈ ພວກເຂົາກໍໄດ້ຈະເລີນຮຸ່ງ
ເຮືອງຂຶ້ນ.
16 ເພາະເມື່ອໂມໂຣໄນຮາເຫັນວ່າພວກ
ເຂົາໄດ້ກັບໃຈແລ້ວ ເພິ່ນຈຶ່ງໄດ້ພາພວກ
ເຂົາໄປຕໍ່ສູ້ຈາກບ່ອນໜຶ່ງ ຫາອີກບ່ອນໜຶ່ງ,
ແລະ ຈາກເມືອງໜຶ່ງໄປຫາອີກເມືອງໜຶ່ງ,
ຈົນວ່າພວກເຂົາໄດ້ເຄິ່ງໜຶ່ງຂອງສິ່ງທີ່ພວກ
ເຂົາເປັນເຈົ້າຂອງ ແລະ ເຄິ່ງໜຶ່ງຂອງແຜ່ນ
ດິນທັງໝົດຂອງພວກເຂົາຄືນມາ.
17 ແລະ ປີທີຫົກສິບເອັດແຫ່ງການປົກ
ຄອງຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້.
18 ແລະ ເຫດການໄດ້ບັງເກີດຂຶ້ນໃນປີ
ທີຫົກສິບສອງແຫ່ງການປົກຄອງຂອງຜູ້
ຕັດສິນ, ວ່າໂມໂຣໄນຮາບໍ່ສາມາດຍຶດເອົາ
ແຜ່ນດິນຄືນມາຈາກຊາວເລມັນອີກແລ້ວ.
19 ສະນັ້ນ ພວກເຂົາຈຶ່ງໄດ້ລົ້ມເລີກແຜນ
ການຂອງພວກເຂົາທີ່ຈະຍຶດເອົາແຜ່ນດິນ
ທີ່ເຫລືອຢູ່ຄືນມາ, ເພາະວ່າຊາວເລມັນມີ
ຈຳນວນຫລວງຫລາຍທີ່ສຸດ ຈົນວ່າເປັນໄປ
ບໍ່ໄດ້ເລີຍທີ່ຊາວນີໄຟຈະມີອຳນາດເໜືອ

12 *ກ* ອບຢ 1:3–4; ຄພ 101:42.
*ຂ* 1 ຕມທ 6:17; 2 ນຟ 9:42.
*ຄ* ຄພ 42:30–31.
13 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
14 *ກ* ຮລມ 3:21.

ພວກເຂົາ; ສະນັ້ນ ໂມໂຣໄນຮາຈຶ່ງໄດ້ໃຊ້ກຳລັງທັບທັງໝົດຂອງເພິ່ນໃຫ້ປົກປັກຮັກສາແຜ່ນດິນສ່ວນທີ່ເພິ່ນຍຶດຄືນມາໄດ້ນັ້ນ.

20 ແລະ ເຫດການໄດ້ບັງເກີດຂຶ້ນ, ຍ້ອນວ່າຄວາມຫລວງຫລາຍຂອງຈຳນວນຜູ້ຄົນຂອງຊາວເລມັນ ຊາວນີໄຟຈຶ່ງເກີດມີຄວາມຢ້ານກົວຫລາຍຂຶ້ນ, ຢ້ານວ່າຕົນເອງຈະຜ່າຍແພ້, ແລະ ຖືກຢຽບຍ່ຳລົງ, ແລະ ຖືກຂ້າ, ແລະ ຖືກທຳລາຍ.

21 ແທ້ຈິງແລ້ວ, ພວກເຂົາເລີ່ມຈື່ຈຳຄຳທຳນາຍຂອງແອວມາ, ແລະ ຄຳທຳນາຍຂອງໂມໄຊຢານຳອີກ; ແລະ ພວກເຂົາເຫັນວ່າຕົນເອງເປັນຄົນແຂງຄໍ, ແລະ ວ່າພວກເຂົາໄດ້ຖືວ່າພຣະບັນຍັດຂອງພຣະເຈົ້າບໍ່ມີຄຸນຄ່າ;

22 ແລະ ວ່າພວກເຂົາໄດ້ປ່ຽນແປງ ແລະ ຢຽບຍ່ຳ [ກ]ກົດຂອງໂມໄຊຢາໄວ້ໃຕ້ຕີນຂອງພວກເຂົາ, ຫລື ວ່າເປັນກົດທີ່ພຣະຜູ້ເປັນເຈົ້າບັນຊາເພິ່ນໃຫ້ບອກແກ່ຜູ້ຄົນ; ແລະ ພວກເຂົາເຫັນວ່າກົດຂອງພວກເຂົາເສື່ອມໂຊມລົງ, ແລະ ວ່າພວກເຂົາໄດ້ກັບກາຍເປັນຄົນຊົ່ວ, ເຖິງຂະໜາດທີ່ພວກເຂົາຊົ່ວຄືກັນກັບຊາວເລມັນ.

23 ແລະ ເປັນຍ້ອນຄວາມຊົ່ວຮ້າຍຂອງພວກເຂົາ ສາດສະໜາຈັກຈຶ່ງເລີ່ມ [ກ]ເສື່ອມໂຊມລົງ; ແລະ ພວກເຂົາ ເລີ່ມບໍ່ເຊື່ອຖືໃນວິນຍານແຫ່ງການທຳນາຍ ແລະ ວິນຍານແຫ່ງການເປີດເຜີຍ; ແລະ ການພິພາກສາຂອງພຣະເຈົ້າກຳລັງຫລຽວເບິ່ງໜ້າພວກເຂົາຢູ່.

24 ແລະ ພວກເຂົາເຫັນວ່າຕົນເອງກັບມາເປັນ [ກ]ຄົນອ່ອນແອຄືກັນກັບຊາວເລມັນ ພີ່ນ້ອງຂອງພວກເຂົາ, ແລະ ພຣະວິນຍານຂອງພຣະຜູ້ເປັນເຈົ້າບໍ່ປົກປ້ອງພວກເຂົາຕໍ່ໄປອີກແລ້ວ; ແທ້ຈິງແລ້ວ, ພຣະອົງໄດ້ຖອນໄປຈາກພວກເຂົາ ເພາະ [ຂ]ພຣະວິນຍານຂອງພຣະຜູ້ເປັນເຈົ້າຈະບໍ່ປະທັບຢູ່ໃນວິຫານທີ່ [ຄ]ບໍ່ບໍລິສຸດ—

25 ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງຢຸດປົກປ້ອງພວກເຂົາດ້ວຍອຳນາດອັນມະຫັດສະຈັນອັນຫາທີ່ປຽບບໍ່ໄດ້ຂອງພຣະອົງ, ເພາະວ່າພວກເຂົາໄດ້ຕົກໄປຢູ່ໃນສະພາບຂອງ [ກ]ຄວາມບໍ່ເຊື່ອຖື ແລະ ຄວາມຊົ່ວຮ້າຍອັນເປັນຕາຢ້ານນັ້ນ; ແລະ ພວກເຂົາຈຶ່ງເຫັນໄດ້ວ່າຊາວເລມັນມີອຳນາດຫລາຍກວ່າພວກເຂົາ, ແລະ ພວກເຂົາຈະຕ້ອງຕາຍຢ່າງຫລີກລ້ຽງບໍ່ໄດ້ ຖ້າຫາກພວກເຂົາບໍ່ກັບຄືນມາ [ຂ]ໃກ້ຊິດຢູ່ກັບພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.

26 ເພາະຈົ່ງ ເບິ່ງ, ພວກເຂົາເຫັນວ່າຊາວເລມັນມີກຳລັງຫລາຍເທົ່າກັບກຳລັງຂອງພວກເຂົາ, ຊຶ່ງເປັນກຳລັງຂອງຄົນຕໍ່ຄົນ. ແລະ ພວກເຂົາໄດ້ຕົກໄປສູ່ການລ່ວງລະເມີດອັນໃຫຍ່ຫລວງດັ່ງນີ້; ແທ້ຈິງແລ້ວ, ພວກເຂົາໄດ້ກັບມາອ່ອນແອເພາະການລ່ວງລະເມີດຂອງພວກເຂົາໃນເວລາ [ກ]ບໍ່ຫລາຍປີດັ່ງນີ້.

## ບົດທີ 5

*ນີໄຟ ແລະ ລີໄຮອຸທິດຕົນເພື່ອສັ່ງສອນ—ຊື່ຂອງພວກເພິ່ນເປັນສິ່ງທີ່ນຳພາໃຫ້ພວກເພິ່ນດຳເນີນຊີວິດຕາມແບບແຜນຂອງບັນພະບຸລຸດຂອງພວກເພິ່ນ—ພຣະຄຣິດ*

22 *ກ* ແອວ 1:1.
23 *ກ* ຄນພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
24 *ກ* ມຊຢ 1:13.
*ຂ* ຄນພ ພຣະວິນຍານບໍລິສຸດ.
*ຄ* ມຊຢ 2:37; ແອວ 7:21; 34:36.
25 *ກ* ຄນພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
*ຂ* ຢຄ 6:5.
26 *ກ* ແອວ 46:8; ຣລມ 12:3–4.

*ໄຖ່ຜູ້ທີ່ກັບໃຈ—ນີໄຟ ແລະ ລີໄຮເຮັດໃຫ້ຄົນຢ່າງຫລວງຫລາຍປ່ຽນໃຈເຫລື້ອມໃສ ແລະ ພວກເພິ່ນຖືກຈັບເຂົ້າຄຸກ ແລະ ຖືກລ້ອມໄວ້ດ້ວຍໄຟ—ເມກແຫ່ງຄວາມມືດປົກຄຸມຜູ້ຄົນຈຳນວນສາມຮ້ອຍຄົນ—ແຜ່ນດິນສັ່ນສະເທືອນ ແລະ ມີສຽງບັນຊາໃຫ້ພວກເຂົາກັບໃຈ—ນີໄຟ ແລະ ລີໄຮສົນທະນາກັບເຫລົ່າທູດ, ແລະ ຝູງຊົນຖືກລ້ອມໄວ້ດ້ວຍໄຟ. ປະມານ 30 ປີ ກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີ
ດຽວກັນນີ້, ຈົ່ງເບິ່ງ, [ກ]ນີໄຟໄດ້ມອບບັນລັງ
ຕັດສິນໃຫ້ແກ່ຄົນຜູ້ໜຶ່ງຊື່ວ່າ ຊີໂຊຣຳ.
2 ເພາະວ່າຜູ້ຄົນເປັນຜູ້ແຕ່ງຕັ້ງກົດໝາຍ
ແລະ [ກ]ອອກສຽງເລືອກເອົາຜູ້ປົກຄອງຂອງ
ພວກເຂົາເອງ, ແຕ່ຜູ້ທີ່ [ຂ]ເລືອກເອົາຄວາມ
ຊົ່ວມີຫລາຍກວ່າຜູ້ທີ່ເລືອກເອົາຄວາມດີ,
ສະນັ້ນ ພວກເຂົາຈຶ່ງກຳລັງສຸກເພື່ອຄວາມ
ພິນາດແລ້ວ, ເພາະວ່າກົດໝາຍໄດ້ເສື່ອມ
ໂຊມລົງ.
3 ແທ້ຈິງແລ້ວ, ແລະ ນີ້ຍັງບໍ່ໝົດ; ພວກ
ເຂົາເປັນຄົນແຂງຄໍ, ເຖິງຂະໜາດທີ່ກົດ
ໝາຍ ຫລື ຄວາມຍຸດຕິທຳ ຈະປົກຄອງ
ພວກເຂົາບໍ່ໄດ້, ນອກຈາກຈະພາໄປເຖິງ
ຄວາມພິນາດເທົ່ານັ້ນ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟ
ໂສກເສົ້າຫລາຍເພາະຄວາມຊົ່ວຮ້າຍຂອງ
ພວກເຂົາ; ແລ້ວເພິ່ນຈຶ່ງ [ກ]ໄດ້ສະລະບັນລັງ
ຕັດສິນຂອງເພິ່ນເພື່ອໄປສັ່ງສອນພຣະຄຳ
ຂອງພຣະເຈົ້າຕະຫລອດວັນເວລາທີ່ເຫລືອ
ຢູ່ຂອງເພິ່ນ, ແລະ ລີໄຮນ້ອງຊາຍຂອງເພິ່ນ
ກໍຄືກັນຕະຫລອດວັນເວລາທີ່ເຫລືອຢູ່ຂອງ
ເພິ່ນ;
5 ເພາະວ່າພວກເພິ່ນຈື່ຈຳຄຳເວົ້າຂອງຮີ
ລາມັນບິດາຂອງພວກເພິ່ນທີ່ໄດ້ເວົ້າໄວ້ກັບ
ພວກເພິ່ນ. ແລະ ນີ້ຄືຄຳເວົ້າຂອງຮີລາມັນ
ຊຶ່ງກ່າວວ່າ:
6 ຈົ່ງເບິ່ງ, ລູກຂອງພໍ່, ພໍ່ປາດຖະໜາ
ຢາກໃຫ້ລູກຈື່ຈຳທີ່ຈະຮັກສາພຣະບັນຍັດ
ຂອງພຣະເຈົ້າ; ແລະ ພໍ່ຢາກໃຫ້ລູກປະ
ກາດຂໍ້ຄວາມນີ້ຕໍ່ຜູ້ຄົນ. ຈົ່ງເບິ່ງ, ພໍ່ໄດ້ຕັ້ງ
ຊື່ໃຫ້ລູກຕາມຊື່ຂອງ [ກ]ບິດາມານດາຄົນ
ທຳອິດ ຜູ້ທີ່ໄດ້ອອກມາຈາກແຜ່ນດິນເຢຣູ
ຊາເລັມ; ແລະ ພໍ່ເຮັດໄປເພື່ອຢາກໃຫ້ລູກ
ຈື່ຈຳຊື່ຂອງລູກ; ແລ້ວລູກກໍຈະຈື່ຈຳພວກ
ເພິ່ນ ແລະ ເວລາລູກຈື່ຈຳພວກເພິ່ນ ລູກ
ກໍຈະຈື່ຈຳຜົນງານຂອງພວກເພິ່ນ; ແລະ
ເວລາລູກຈື່ຈຳຜົນງານຂອງພວກເພິ່ນ ລູກ
ຈະຮູ້ດີວ່າມັນຖືກເວົ້າເຖິງ, ແລະ ຂຽນໄວ້
ວ່າ ພວກເພິ່ນນັ້ນເປັນ [ຂ]ຜູ້ປະເສີດ.
7 ສະນັ້ນ, ລູກຂອງພໍ່, ພໍ່ຢາກໃຫ້ລູກເຮັດ
ສິ່ງທີ່ດີເພື່ອຈະໄດ້ຖືກເວົ້າເຖິງ ແລະ ຖືກ
ຂຽນໄວ້ຄືກັນກັບທີ່ພວກເພິ່ນໄດ້ຖືກເວົ້າ
ເຖິງ ແລະ ຖືກຂຽນເຖິງ.
8 ແລະ ບັດນີ້ລູກຂອງພໍ່, ຈົ່ງເບິ່ງ ພໍ່ມີ
ບາງສິ່ງທີ່ຈະຂໍຈາກລູກຄື ບໍ່ໃຫ້ລູກເຮັດສິ່ງ
ເຫລົ່ານີ້ເພື່ອເປັນການອວດອ້າງ, ແຕ່ໃຫ້
ລູກເຮັດສິ່ງເຫລົ່ານີ້ ເພື່ອເປັນການສະສົມ
[ກ]ຊັບສົມບັດໄວ້ໃນສະຫວັນເພື່ອຕົນເອງ,
ແທ້ຈິງແລ້ວ, ມັນເປັນສິ່ງທີ່ໝົດບໍ່ເປັນ ແລະ
ເປັນຢູ່ຊົ່ວນິລັນດອນ; ແທ້ຈິງແລ້ວ, ເພື່ອ
ລູກຈະມີຂອງປະທານອັນມີ [ຂ]ຄຸນຄ່າແຫ່ງ
ຊີວິດນິລັນດອນ, ຊຶ່ງພວກເຮົາມີເຫດຜົນ
ທີ່ຈະຄິດວ່າບັນພະບຸລຸດຂອງພວກເຮົາໄດ້
ຮັບມັນມາແລ້ວ.
9 ໂອ້ ຈົ່ງຈື່ຈຳໄວ້, ຈື່ຈຳໄວ້, ລູກຂອງພໍ່,

**5** 1 *ກ* ຮລມ 3:37.
2 *ກ* ມຊຢ 29:25–27.
*ຂ* ແອວ 10:19.
4 *ກ* ແອວ 4:15–20.
6 *ກ* 1 ນຟ 1:1, 5.
*ຂ* 2 ນຟ 33.
8 *ກ* 3 ນຟ 13:19–21.
*ຂ* ຄພ 14:7.

[ກ]ຖ້ອຍ ຄຳ ຂອງ ກະສັດ ເບັນ ຢາ ມິນ ທີ່ ໄດ້
ກ່າວກັບຜູ້ຄົນຂອງເພິ່ນ; ແທ້ຈິງແລ້ວ, ຈົ່ງ
ຈື່ຈຳໄວ້ວ່າ ບໍ່ມີທາງ ຫລື ວິທີອື່ນໃດເລີຍທີ່
ມະນຸດຈະລອດໄດ້, ນອກຈາກທາງໂລຫິດ
ທີ່ [ຂ]ຊົດໃຊ້ແທນຂອງພຣະເຢຊູຄຣິດຜູ້ຈະ
ສະເດັດມາເທົ່ານັ້ນ; ແທ້ຈິງແລ້ວ, ພຣະອົງ
ຈະສະເດັດມາເພື່ອ [ຄ]ໄຖ່ [ງ]ໂລກ.
10 ແລະ ຈົ່ງຈື່ ຈຳ [ກ]ຄຳ ເວົ້າຂອງແອມ
ມິວເລັກນຳອີກ ຊຶ່ງເພິ່ນໄດ້ເວົ້າຕໍ່ຊີເອສ
ຣອມ, ຢູ່ໃນເມືອງອຳໂມນໄນຮານັ້ນ; ເພາະ
ເພິ່ນໄດ້ເວົ້າກັບລາວວ່າ ພຣະຜູ້ເປັນເຈົ້າ
ຈະສະເດັດມາຢ່າງແນ່ນອນ ເພື່ອໄຖ່ຜູ້
ຄົນຂອງພຣະອົງ, ແຕ່ວ່າພຣະອົງຈະບໍ່ໄຖ່
ພວກເຂົາໃນບາບຂອງພວກເຂົາ, ແຕ່ຈະ
ໄຖ່ພວກເຂົາຈາກບາບຂອງພວກເຂົາ.
11 ແລະ ພຣະອົງມີອຳນາດຊຶ່ງໄດ້ຮັບ
ຈາກພຣະບິດາເພື່ອໄຖ່ມະນຸດຈາກບາບ
ຂອງພວກເຂົາ ຍ້ອນການກັບໃຈ; ສະນັ້ນ
ພຣະອົງຈຶ່ງໄດ້ [ກ]ສົ່ງທູດຂອງພຣະອົງລົງມາ
ເພື່ອປະກາດຂ່າວກ່ຽວກັບເງື່ອນໄຂຂອງ
ການກັບໃຈ, ຊຶ່ງຈະນຳໄປຫາອຳນາດຂອງ
ພຣະຜູ້ໄຖ່, ໄປຫາຄວາມລອດຂອງຈິດວິນ
ຍານຂອງພວກເຂົາ.
12 ແລະ ບັດນີ້, ຈົ່ງຈື່ໄວ້, ລູກຂອງພໍ່, ຈົ່ງ
ຈື່ໄວ້ວ່າ ລູກຈະຕ້ອງສ້າງ [ກ]ຮາກຖານຂອງ
ລູກຂຶ້ນເທິງ [ຂ]ດານຫີນຂອງພຣະຜູ້ໄຖ່ຂອງ
ພວກເຮົາ, ຄື ພຣະຄຣິດ, ພຣະບຸດຂອງ
ພຣະເຈົ້າ; ເພື່ອວ່າເມື່ອມານສົ່ງລົມພະຍຸ
ຮ້າຍຂອງມັນມາ, ແທ້ຈິງແລ້ວ, ຟ້າແມບ
ເຫລື້ອມກັບລົມບ້າໝູຂອງມັນມາ, ແທ້ຈິງ
ແລ້ວ, ເມື່ອໝາກເຫັບທັງໝົດ ແລະ [ຄ]ລົມ
ຝົນອັນແຮງກ້າຂອງມັນລົງມາຕີລູກ, ມັນ
ຈະບໍ່ມີອຳນາດອັນໃດເໜືອລູກເລີຍທີ່ຈະ
ແກ່ລູກລົງໄປຫາເຫວເລິກແຫ່ງຄວາມທຸກ
ທໍລະມານ ແລະ ຄວາມຈິບຫາຍອັນບໍ່ສິ້ນ
ສຸດ, ເພາະດານຫີນບ່ອນທີ່ລູກຖືກສ້າງ
ຂຶ້ນເທິງມັນ ຊຶ່ງເປັນຮາກຖານທີ່ແໜ້ນໜາ,
ເປັນຮາກຖານຊຶ່ງຫາກມະນຸດສ້າງຂຶ້ນເທິງ
ມັນ ພວກເຂົາຈະຕົກໄປບໍ່ໄດ້.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ນີ້ຄື
ຄຳເວົ້າຊຶ່ງຮີລາມັນໄດ້ [ກ]ສິດສອນລູກຊາຍ
ຂອງເພິ່ນ; ແທ້ຈິງແລ້ວ, ເພິ່ນໄດ້ສິດສອນ
ພວກເພິ່ນຫລາຍເລື່ອງຊຶ່ງບໍ່ໄດ້ຂຽນໄວ້,
ແລະ ຫລາຍເລື່ອງຊຶ່ງໄດ້ຂຽນໄວ້.
14 ແລະ ພວກເພິ່ນໄດ້ຈື່ຈຳຄຳເວົ້າຂອງ
ເພິ່ນ; ແລະ ສະນັ້ນ ພວກເພິ່ນຈຶ່ງໄດ້ອອກ
ໄປ, ໂດຍຮັກສາພຣະບັນຍັດຂອງພຣະ
ເຈົ້າ, ເພື່ອຈະໄດ້ສິດສອນພຣະຄຳຂອງ
ພຣະເຈົ້າໃຫ້ແກ່ບັນດາຜູ້ຄົນຂອງນີໄຟທັງ
ໝົດ, ໂດຍເລີ່ມຕົ້ນຕັ້ງແຕ່ເມືອງອຸດົມສົມ
ບູນໄປ;
15 ແລະ ຈາກ ນັ້ນ ກໍ ໄປ ຫາ ເມືອງ ກິດ;
ແລະ ຈາກ ເມືອງກິດກໍໄປ ຫາ ເມືອງມິວ
ເລັກ.
16 ແລະ ຈາກ ເມືອງ ໜຶ່ງ ກໍ ໄປ ຫາ ອີກ
ເມືອງໜຶ່ງ ຈົນວ່າພວກເພິ່ນໄດ້ອອກໄປ
ຫາບັນດາຜູ້ຄົນຂອງນີໄຟທັງໝົດ ຊຶ່ງຢູ່ໃນ
ແຜ່ນດິນທາງໃຕ້; ແລະ ຈາກທີ່ນັ້ນ ໄດ້ເຂົ້າ
ໄປໃນແຜ່ນດິນເຊຣາເຮັມລາໄປຫາບັນດາ
ຊາວເລມັນ.
17 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເພິ່ນໄດ້ສັ່ງສອນດ້ວຍພະລັງອັນຍິ່ງ

9 ກ ມຊຢ 2:9.
ຂ ມຊຢ 3:17–18.
ຄມພ ຊົດໃຊ້, ການຊົດໃຊ້.
ຄ ຄມພ ໄຖ່, ການໄຖ່,
ຖືກໄຖ່.
ງ ຄມພ ໂລກ—ຜູ້ຄົນທີ່ບໍ່
ເຊື່ອຟັງພຣະບັນຍັດ.
10 ກ ແອວ 11:34.
11 ກ ແອວ 13:24–25.
12 ກ ອຊຢ 28:16;
ຢຄ 4:16.
ຂ ມທ 7:24–27;
ຄພ 6:34;
ມຊ 7:53.
ຄມພ ຫີນ;
ຫີນເສົາເອກ.
ຄ 3 ນຟ 14:25, 27.
13 ກ ມຊຢ 1:4.

ໃຫຍ່, ເຖິງຂະໜາດທີ່ພວກເພິ່ນໄດ້ເຮັດໃຫ້ [ກ]ພວກທີ່ແຍກອອກໄປຈາກຊາວນີໄຟຍອມຈຳນົນ, ເຖິງຂະໜາດທີ່ພວກເຂົາໄດ້ອອກມາຮັບສາລະພາບບາບຂອງຕົນ ແລະ ຮັບບັບຕິສະມາໄວ້ກັບການກັບໃຈ, ແລະ ກັບຄືນໄປຫາຊາວນີໄຟທັນທີ ເພື່ອຈະພະຍາຍາມແກ້ໄຂຄວາມຜິດພາດທີ່ຕົນໄດ້ກະທຳໄປນັ້ນ.

18 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ນີໄຟກັບລີໄຮໄດ້ສັ່ງສອນຊາວເລມັນດ້ວຍອຳນາດ ແລະ ສິດອຳນາດອັນຍິ່ງໃຫຍ່ເຊັ່ນນັ້ນ, ເພາະວ່າພວກເພິ່ນໄດ້ຮັບອຳນາດ ແລະ ສິດອຳນາດເພື່ອຈະໄດ້ [ກ]ກ່າວ, ແລະ ພວກເພິ່ນໄດ້ຮັບສິ່ງທີ່ພວກເພິ່ນຄວນກ່າວນຳອີກ—

19 ສະນັ້ນ ມັນຈຶ່ງໄດ້ເກີດມີຄວາມແປກໃຈຫລາຍທີ່ສຸດຕໍ່ຊາວເລມັນ ຈົນເຮັດໃຫ້ພວກເຂົາ [ກ]ສຳນຶກໄດ້, ເຖິງຂະໜາດທີ່ໄດ້ມີຊາວເລມັນຈຳນວນແປດພັນຄົນທີ່ຢູ່ໃນແຜ່ນດິນເຊຣາເຮັມລາ ແລະ ແຜ່ນດິນອ້ອມແອ້ມນັ້ນຮັບບັບຕິສະມາໄວ້ກັບການກັບໃຈ, ແລະ ໄດ້ສຳນຶກເຖິງຄວາມຊົ່ວຮ້າຍຂອງຮີດຄອງປະເພນີຂອງບັນພະບຸລຸດຂອງພວກເຂົາ.

20 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ນີໄຟ ແລະ ລີໄຮໄດ້ອອກຈາກບ່ອນນັ້ນໄປຫາແຜ່ນດິນນີໄຟ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ຢູ່ທີ່ນັ້ນພວກເພິ່ນຖືກກອງທັບຂອງຊາວເລມັນຈັບໄປ ແລະ ເອົາເຂົ້າ [ກ]ຄຸກ; ແທ້ຈິງແລ້ວ, ເປັນຄຸກບ່ອນດຽວກັນກັບທີ່ອຳໂມນ ແລະ ພີ່ນ້ອງຂອງເພິ່ນຖືກຂ້າໃຊ້ຂອງລິມໄຮເອົາໄປກັກຂັງ.

22 ແລະ ຫລັງຈາກທີ່ພວກເພິ່ນຖືກຈັບເຂົ້າຄຸກໄດ້ຫລາຍມື້ປາດສະຈາກເຂົ້ານ້ຳ, ຈົ່ງເບິ່ງ, ພວກເຂົາໄດ້ເຂົ້າໄປໃນຄຸກເພື່ອຈະເອົາພວກເພິ່ນໄປຂ້າຖິ້ມເສຍ.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟ ແລະ ລີໄຮໄດ້ຖືກອ້ອມໄວ້ຄືກັບວ່າດ້ວຍ [ກ]ໄຟ, ເຖິງຂະໜາດທີ່ພວກເຂົາບໍ່ກ້າແຕະຕ້ອງພວກເພິ່ນເລີຍ ເພາະຢ້ານວ່າໄຟຈະໄໝ້ພວກເຂົາ. ເຖິງຢ່າງໃດກໍຕາມ, ນີໄຟ ແລະ ລີໄຮບໍ່ໄດ້ຖືກໄຟໄໝ້ເລີຍ; ແລະ ເບິ່ງຄືວ່າພວກເພິ່ນຢືນຢູ່ທ່າມກາງກອງໄຟ ແລະ ໄຟບໍ່ໄດ້ໄໝ້ພວກເພິ່ນ.

24 ແລະ ເວລາພວກເພິ່ນເຫັນວ່າຕົນເອງຖືກລ້ອມໄວ້ດ້ວຍ [ກ]ເລົາໄຟ, ແລະ ເຫັນວ່າໄຟບໍ່ໄດ້ໄໝ້ຕົນ, ໃຈຂອງພວກເພິ່ນຈຶ່ງມີກຳລັງຂຶ້ນ.

25 ເພາະ ວ່າ ພວກ ເພິ່ນ ເຫັນ ວ່າ ຊາວເລມັນບໍ່ກ້າແຕະຕ້ອງພວກເພິ່ນ; ທັງບໍ່ກ້າເຂົ້າມາໃກ້ພວກເພິ່ນ, ແຕ່ວ່າຢືນຢູ່ຄືກັນກັບເກີດເປັນຄົນໄບ້ດ້ວຍຄວາມແປກປະຫລາດໃຈ.

26 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ນີໄຟ ແລະ ລີໄຮໄດ້ຢືນຂຶ້ນ ແລະ ເລີ່ມເວົ້າກັບພວກເຂົາ, ມີຄວາມວ່າ: ບໍ່ຕ້ອງຢ້ານ, ເພາະຈົ່ງເບິ່ງ, ມັນແມ່ນພຣະເຈົ້າທີ່ສະແດງສິ່ງອັດສະຈັນໃຈນີ້ໃຫ້ພວກທ່ານເຫັນ, ເພື່ອສະແດງໃຫ້ພວກທ່ານເຫັນວ່າພວກທ່ານຈະຂ້າພວກເຮົາບໍ່ໄດ້.

27 ແລະ ຈົ່ງເບິ່ງ, ເວລາພວກເພິ່ນກ່າວຂໍ້ຄວາມນີ້ແລ້ວ, ແຜ່ນດິນກໍສັ່ນສະເທືອນຢ່າງໜັກ, ແລະ ກຳແພງຄຸກກໍສັ່ນສະເທືອນ

17 *ກ* ຮລມ 4:4.
18 *ກ* ຄພ 100:5–8.
ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.
19 *ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ; ວຽກງານເຜີຍແຜ່.
21 *ກ* ມຊຢ 7:6–7; 21:23.
23 *ກ* ອພຍ 3:2.
24 *ກ* ອພຍ 14:24;
1 ນຟ 1:6; ຄພ 29:12;
ຈສ—ປ 1:16.

ຄ້າຍຄືກັບວ່າມັນກຳລັງຈະພັງລົງສູ່ພື້ນດິນ;
ແຕ່ຈົ່ງເບິ່ງ, ມັນບໍ່ໄດ້ພັງລົງ. ແລະ ຈົ່ງເບິ່ງ,
ຄົນທີ່ຢູ່ໃນຄຸກນັ້ນເປັນຊາວເລມັນ ແລະ
ຊາວນີໄຟຜູ້ທີ່ແຍກອອກໄປນັ້ນ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ຖືກປົກຄຸມໄວ້ດ້ວຍເມກແຫ່ງ
[ກ]ຄວາມມືດ, ແລະ ຄວາມຢ້ານຢ່າງຫລວງ
ຫລາຍໄດ້ເກີດກັບພວກເຂົາ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
[ກ]ສຽງດັງຂຶ້ນຄ້າຍຄືກັບວ່າ ສຽງນັ້ນຢູ່ເທິງ
ເມກແຫ່ງຄວາມມືດ, ມີຄວາມວ່າ: ເຈົ້າຈົ່ງ
ກັບໃຈ, ເຈົ້າຈົ່ງກັບໃຈ, ແລະ ຢ່າພະຍາ
ຍາມທຳລາຍຜູ້ຮັບໃຊ້ຂອງເຮົາອີກຕໍ່ໄປ ຜູ້
ຊຶ່ງເຮົາສົ່ງມາຫາພວກເຈົ້າເພື່ອປະກາດ
ຂ່າວປະເສີດ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາພວກເຂົາໄດ້ຍິນສຽງນີ້, ແລະ ເຫັນ
ວ່າບໍ່ແມ່ນສຽງຟ້າຮ້ອງ, ທັງບໍ່ແມ່ນສຽງກຶກ
ກ້ອງ, ແຕ່ວ່າມັນເປັນສຽງອ່ອນຫວານຂອງ
ຄວາມນິ້ມນວນຢ່າງແຈ່ມແຈ້ງ, ຄ້າຍຄືກັບ
ວ່າເປັນ [ກ]ສຽງສີ່ມໃສ່ຫູ, ແລະ ມັນໄດ້ສຽບ
ແທງເຂົ້າໄປໃນຈິດວິນຍານທຸກດວງ—
31 ແລະ ທັງໆທີ່ສຽງນັ້ນນິ້ມນວນ, ຈົ່ງ
ເບິ່ງ ແຜ່ນດິນຍັງສັ່ນສະເທືອນຫລາຍທີ່
ສຸດ, ແລະ ກຳແພງຄຸກກໍສັ່ນສະເທືອນ
ອີກ, ຄ້າຍກັບວ່າມັນກຳລັງຈະເພພັງລົງ
ສູ່ພື້ນດິນ; ແລະ ຈົ່ງເບິ່ງ ເມກຊຶ່ງປົກຄຸມ
ພວກເຂົາຢູ່ນັ້ນກໍບໍ່ໄດ້ລ່ອງລອຍອອກໄປ
ເລີຍ—
32 ແລະ ຈົ່ງເບິ່ງ ມີສຽງດັງຂຶ້ນອີກ, ມີ
ຄວາມວ່າ: ເຈົ້າຈົ່ງກັບໃຈ, ເຈົ້າຈົ່ງກັບໃຈ,
ເພາະອານາຈັກສະຫວັນໃກ້ເຂົ້າມາເຖິງ
ແລ້ວ; ແລະ ຢ່າໄດ້ພະຍາຍາມທຳລາຍຜູ້
ຮັບໃຊ້ຂອງເຮົາອີກຕໍ່ໄປ; ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ແຜ່ນດິນ ແລະ ກຳແພງ
ຄຸກໄດ້ສັ່ນສະເທືອນອີກ.
33 ແລະ ສຽງດັງມາອີກເປັນເທື່ອທີສາມ,
ແລະ ໄດ້ເວົ້າຂໍ້ຄວາມອັນໜ້າອັດສະຈັນ
ໃຈກັບພວກເຂົາ ຊຶ່ງມະນຸດບໍ່ສາມາດກ່າວ,
ແລະ ກຳແພງໄດ້ສັ່ນອີກ, ແລະ ແຜ່ນດິນ
ໄດ້ສັ່ນສະເທືອນຄ້າຍຄືກັບວ່າມັນກຳລັງ
ຈະແຍກອອກຈາກກັນ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນປົບໜີໄປບໍ່ໄດ້ຍ້ອນວ່າເມກແຫ່ງ
ຄວາມມືດນັ້ນໄດ້ປົກຄຸມພວກເຂົາໄວ້; ແທ້
ຈິງແລ້ວ, ພວກເຂົາເຄື່ອນໄຫວໄປມາບໍ່ໄດ້
ເລີຍ ເພາະຄວາມຢ້ານກົວທີ່ເກີດກັບພວກ
ເຂົາ.
35 ບັດນີ້ມີຊາຍຄົນໜຶ່ງໃນບັນດາພວກ
ເຂົາຊຶ່ງເປັນຊາວນີໄຟໂດຍກຳເນີດ, ຊຶ່ງ
ແຕ່ກ່ອນເຄີຍເປັນສະມາຊິກຂອງສາດສະ
ໜາຈັກຂອງພຣະເຈົ້າ ແຕ່ໄດ້ແຍກອອກໄປ
ຈາກພວກເຂົາ.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື
ລາວໄດ້ຫັນຕົວໄປ, ແລະ ຈົ່ງເບິ່ງ, ລາວໄດ້
ເຫັນໜ້າຂອງນີໄຟ ແລະ ລີໄຮ ຜ່ານຄວາມ
ມືດຂອງເມກ; ແລະ ຈົ່ງເບິ່ງ, ມັນໄດ້ [ກ]ຮຸ່ງ
ເຫລື້ອມທີ່ສຸດຄືກັນກັບໜ້າຂອງເຫລົ່າທູດ.
ແລະ ລາວໄດ້ເຫັນພວກເພິ່ນຫລຽວໜ້າຂຶ້ນ
ໄປເທິງຟ້າ; ແລະ ພວກເພິ່ນຢູ່ໃນທ່າທາງທີ່
ກຳລັງເວົ້າ ຫລື ກຳລັງເປັ່ງສຽງກັບຜູ້ໃດຜູ້
ໜຶ່ງຊຶ່ງພວກເພິ່ນຫລຽວເຫັນ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາຍຄົນນັ້ນໄດ້ຮ້ອງບອກຝູງຊົນເພື່ອໃຫ້
ພວກເຂົາຫລຽວມາເບິ່ງ. ແລະ ຈົ່ງເບິ່ງ, ໄດ້
ມີພະລັງທີ່ເຮັດໃຫ້ຄົນເຫລົ່ານັ້ນສາມາດ
ຫລຽວມາເບິ່ງ ແລະ ພວກເຂົາໄດ້ເຫັນໜ້າ
ຂອງນີໄຟ ແລະ ລີໄຮ.

---

28 *ກ* ອພຍ 14:20.
29 *ກ* 3 ນຟ 11:3–14.
30 *ກ* 1 ກສ 19:12; ຄພ 85:6.
36 *ກ* ອພຍ 34:29–35; ກຈກ 6:15.

38 ແລະ ຜູ້ຄົນ ໄດ້ ເວົ້າກັບ ຊາຍ ຄົນ ນັ້ນ
ວ່າ: ຈົ່ງເບິ່ງ, ເລື່ອງທັງໝົດ ນີ້ໝາຍຄວາມ
ວ່າແນວໃດ, ແລະ ຄົນທັງສອງນັ້ນ ກຳລັງ
ສົນທະນາກັບຜູ້ໃດຢູ່?
39 ບັດ ນີ້ຊາຍຄົນນັ້ນມີຊື່ວ່າ ອາມີນາ
ດາບ. ແລະ ອາມີນາດາບໄດ້ເວົ້າກັບຜູ້ຄົນ
ວ່າ: ພວກເພິ່ນກຳລັງສົນທະນາກັບ ເຫລົ່າ
ທູດຂອງພຣະເຈົ້າ.
40 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນໄດ້ຖາມລາວວ່າ: ພວກເຮົາຈະເຮັດ
[ກ]ແນວໃດ, ເພື່ອຈະໃຫ້ເມກແຫ່ງຄວາມມືດ
ໜີຈາກພວກເຮົາໄປ?
41 ແລະ ອາມີນາດາບໄດ້ເວົ້າກັບພວກ
ເຂົາວ່າ: ພວກທ່ານຕ້ອງ [ກ]ກັບໃຈ, ແລະ
ຮ້ອງ ຂໍ ຕໍ່ ສຽງນັ້ນ ຈົນວ່າ ພວກ ທ່ານມີ
[ຂ]ສັດທາໃນພຣະຄຣິດ, ຜູ້ຊຶ່ງແອວມາ, ແລະ
ແອມມິວເລັກ, ແລະ ຊີເອສຣອມ ໄດ້ສິດ
ສອນພວກທ່ານໄວ້; ແລະ ຖ້າຫາກພວກ
ທ່ານປະຕິບັດຕາມນີ້, ເມກແຫ່ງຄວາມມືດ
ຈະເລື່ອນໄປຈາກພວກທ່ານ.
42 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ເຫລົ່ານັ້ນ ໄດ້ ເລີ່ມຮ້ອງຂໍຕໍ່ສຽງຂອງຜູ້ທີ່
ເຮັດໃຫ້ແຜ່ນດິນສັ່ນສະເທືອນ, ແທ້ຈິງ
ແລ້ວ, ພວກເຂົາໄດ້ຮ້ອງຂໍຈົນວ່າເມກແຫ່ງ
ຄວາມມືດໄດ້ກະຈາຍໄປ.
43 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາພວກເຂົາຫລຽວເບິ່ງ, ແລະ ເຫັນ
ວ່າເມກແຫ່ງຄວາມມືດນັ້ນໄດ້ກະຈາຍໄປ
ແລະ ບໍ່ໄດ້ປົດບັງພວກເຂົາອີກແລ້ວ, ຈົ່ງ
ເບິ່ງ, ພວກເຂົາເຫັນວ່າຕົນເອງຖືກ [ກ]ລ້ອມ
ໄວ້ດ້ວຍເສົາໄຟ, ແທ້ຈິງແລ້ວທຸກຄົນ.
44 ແລະ ນີໄຟກັບລີໄຮໄດ້ຢືນຢູ່ໃນທ່າມ
ກາງພວກເຂົາ; ແທ້ຈິງແລ້ວ, ພວກເຂົາຖືກ
ປິດອ້ອມຮອບ; ແທ້ຈິງແລ້ວ, ຄ້າຍຄືກັບວ່າ
ພວກເຂົາຢູ່ທ່າມກາງແປວໄຟ, ແຕ່ມັນບໍ່
ໄດ້ເປັນອັນຕະລາຍຕໍ່ພວກເຂົາເລີຍ, ທັງບໍ່
ໄດ້ ໄໝ້ລາມໄປຫາກຳແພງຄຸກເລີຍ; ແລະ
ພວກເຂົາກໍເຕັມໄປດ້ວຍ [ກ]ຄວາມສຸກ ຈົນບໍ່
ອາດຈະພັນລະນາໄດ້ ແລະ ເຕັມໄປດ້ວຍ
ລັດສະໝີພາບ.
45 ແລະ ຈົ່ງ ເບິ່ງ, [ກ]ພຣະ ວິນ ຍານ ສັກ
ສິດຂອງພຣະເຈົ້າໄດ້ສະເດັດລົງມາຈາກ
ຟ້າສະຫວັນ, ແລະ ໄດ້ເຂົ້າໄປໃນໃຈຂອງ
ພວກເຂົາ, ແລະ ພວກເຂົາຄືກັບເຕັມປ່ຽມ
ດ້ວຍໄຟ, ແລະ ພວກເຂົາສາມາດ [ຂ]ເວົ້າຂໍ້
ຄວາມອັນໜ້າອັດສະຈັນອອກມາ.
46 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
ສຽງດັງມາຫາພວກເຂົາ, ແທ້ຈິງແລ້ວ, ມັນ
ເປັນສຽງທີ່ອ່ອນຫວານ, ຄ້າຍຄືກັບວ່າມັນ
ເປັນສຽງສິ່ມໃສ່ຫູ, ມີຄວາມວ່າ:
47 [ກ]ສັນຕິສຸກ, ສັນຕິສຸກຈົ່ງມີແກ່ເຈົ້າ,
ຍ້ອນວ່າສັດທາຂອງເຈົ້າໃນຜູ້ທີ່ເຮົາຮັກ
ຫລາຍທີ່ສຸດ, ຜູ້ທີ່ເປັນຢູ່ນັບຕັ້ງແຕ່ການ
ວາງຮາກຖານຂອງໂລກ.
48 ແລະ ບັດນີ້, ເມື່ອພວກເຂົາໄດ້ຍິນຂໍ້
ຄວາມນີ້ແລ້ວ ພວກເຂົາກໍໄດ້ຫລຽວເບິ່ງ
ຄ້າຍຄືກັບວ່າສຽງນັ້ນມາຈາກໃສ; ແລະ
ຈົ່ງເບິ່ງ, ພວກເຂົາໄດ້ເຫັນ [ກ]ຟ້າສະຫວັນ
ເປີດອອກ; ແລະ ເຫລົ່າທູດໄດ້ລົງມາຈາກ
ສະຫວັນ ແລະ ປະຕິບັດຕໍ່ພວກເຂົາ.
49 ແລະ ມັນມີຢູ່ປະມານສາມຮ້ອຍຄົນທີ່
ໄດ້ເຫັນ ແລະ ໄດ້ຍິນເລື່ອງເຫລົ່ານີ້; ແລະ
ພວກເຂົາໄດ້ຮັບຄຳສັ່ງໃຫ້ອອກໄປ ແລະ ບໍ່
ໃຫ້ແປກໃຈ, ທັງບໍ່ໃຫ້ສົງໃສ.

40 *ກ* ກຈກ 2:37–39.
41 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຄມພ ສັດທາ.
43 *ກ* 3 ນຟ 17:24; 19:14.
44 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
45 *ກ* 3 ນຟ 9:20; ອທ 12:14.
*ຂ* ຄມພ ຂອງປະທານ ແຫ່ງພຣະວິນຍານ.
47 *ກ* ຄມພ ສະຫງົບ, ຄວາມສະຫງົບ.
48 *ກ* 1 ນຟ 1:8.

50 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ອອກໄປ, ແລະ ໄດ້ປະຕິບັດ
ແກ່ຜູ້ຄົນ, ປະກາດເລື່ອງທັງໝົດທີ່ພວກ
ເຂົາໄດ້ຍິນ ແລະ ໄດ້ເຫັນມາຕໍ່ຜູ້ຄົນທົ່ວທຸກ
ພາກພື້ນໂດຍອ້ອມຮອບ, ເຖິງຂະໜາດທີ່
ຊາວເລມັນສ່ວນໃຫຍ່ໄດ້ຍອມຮັບເລື່ອງ
ເຫລົ່ານີ້, ຍ້ອນວ່າຫລັກຖານ ແລະ ຄວາມ
ຍິ່ງໃຫຍ່ທີ່ພວກເຂົາໄດ້ຮັບມາ.
51 ແລະ ຫລາຍຕໍ່ຫລາຍຄົນທີ່ [ກ]ສຳນຶກ
ຕົວກໍໄດ້ວາງອາວຸດແຫ່ງສົງຄາມຂອງຕົນ,
ແລະ ປະຄວາມກຽດຊັງຂອງພວກເຂົາ
ແລະ ຮີດຄອງປະເພນີຂອງບັນພະບຸລຸດ
ຂອງພວກເຂົາ.
52 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ສົ່ງແຜ່ນດິນທີ່ພວກເຂົາໄດ້
ຍຶດເອົາມານັ້ນຄືນໃຫ້ຊາວນີໄຟ.

## ບົດທີ 6

*ຊາວເລມັນຜູ້ທີ່ຊອບທຳສັ່ງສອນຊາວນີໄຟຜູ້ທີ່ຊົ່ວ—ຜູ້ຄົນສອງຝ່າຍຈະເລີນຮຸ່ງເຮືອງຂຶ້ນໃນສະໄໝແຫ່ງສັນຕິສຸກ ແລະ ເຕັມໄປດ້ວຍຄວາມອຸດົມສົມບູນ—ລູຊິເຟີ, ຜູ້ສ້າງບາບ, ຍຸຍົງໃຈຂອງຄົນຊົ່ວ ແລະ ພວກໂຈນແກດີອານທັນໃຫ້ກະທຳການຄາດຕະກຳ ແລະ ສິ່ງທີ່ຊົ່ວຮ້າຍ—ພວກເຂົາໂຄ່ນລົ້ມຝ່າຍຜູ້ປົກຄອງຂອງຊາວນີໄຟ. ປະມານ 29–23 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີ
ທີຫົກສິບສອງແຫ່ງການປົກຄອງຂອງຜູ້
ຕັດສິນໄດ້ຜ່ານໄປ, ເລື່ອງລາວທັງໝົດນີ້
ໄດ້ເກີດຂຶ້ນຄື ຊາວເລມັນສ່ວນໃຫຍ່ໄດ້
ກາຍມາເປັນຄົນຊອບທຳ, ເຖິງຂະໜາດ
ທີ່ [ກ]ຄວາມຊອບທຳຂອງພວກເຂົາມີຫລາຍ
ກວ່າຊາວນີໄຟອີກຊ້ຳ, ຍ້ອນວ່າຄວາມໝັ້ນ
ຄົງ ແລະ ຄວາມສະໝ່ຳສະເໝີຂອງພວກ
ເຂົາຢູ່ໃນສັດທາ.
2 ເພາະ ຈົ່ງເບິ່ງ, ໄດ້ມີຊາວນີໄຟເປັນ
ຈຳນວນຫລວງຫລາຍທີ່ກາຍມາເປັນຄົນ
[ກ]ແຂງກະດ້າງ ແລະ ບໍ່ສຳນຶກຜິດ ແລະ
ຊົ່ວຮ້າຍ, ເຖິງຂະໜາດທີ່ພວກເຂົາບໍ່ຍອມ
ຮັບຟັງພຣະຄຳຂອງພຣະເຈົ້າ ແລະ ຄຳສັ່ງ
ສອນ ແລະ ຄຳທຳນາຍທັງໝົດທີ່ມາໃນບັນ
ດາພວກເຂົາ.
3 ເຖິງຢ່າງໃດກໍຕາມ, ສະມາຊິກຂອງ
ສາດສະໜາຈັກກໍຍັງມີຄວາມຜາສຸກພໍສົມ
ຄວນນຳການປ່ຽນໃຈເຫລື້ອມໃສຂອງຊາວ
ເລມັນ, ແທ້ຈິງແລ້ວ, ຍ້ອນວ່າສາດສະໜາ
ຈັກຂອງພຣະເຈົ້າ, ຊຶ່ງໄດ້ສະຖາປະນາຂຶ້ນ
ໃນບັນດາພວກເຂົາ. ແລະ ພວກເຂົາໄດ້
[ກ]ຜູກສຳພັນທະໄມຕີຕໍ່ກັນ, ແລະ ໄດ້ປິຕິຍິນ
ດີນຳກັນ, ແລະ ໄດ້ມີຄວາມຊື່ນຊົມຫລາຍ
ທີ່ສຸດ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນຫລາຍຄົນໄດ້ລົງມາເມືອງເຊຣາ
ເຮັມລາ, ແລະ ໄດ້ປະກາດແກ່ຊາວນີໄຟ
ເຖິງ [ກ]ການປ່ຽນໃຈເຫລື້ອມໃສຂອງພວກ
ເຂົາ, ແລະ ໄດ້ຊັກຊວນພວກເຂົາເຖິງ
ສັດທາ ແລະ ການກັບໃຈ.
5 ແທ້ຈິງແລ້ວ, ແລະ ຫລາຍຄົນໄດ້ສັ່ງ
ສອນດ້ວຍອຳນາດ ແລະ ສິດອຳນາດອັນ
ຍິ່ງໃຫຍ່ທີ່ສຸດ, ຈົນວ່າພວກເຂົາໄດ້ຊັກນຳ
ຫລາຍຄົນລົງມາສູ່ສ່ວນເລິກແຫ່ງຄວາມ
ຖ່ອມຕົວ, ແລະ ເປັນຜູ້ຕິດຕາມທີ່ຖ່ອມຕົວ
ຂອງພຣະເຈົ້າ ແລະ ພຣະເມສານ້ອຍ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນຫລາຍຄົນໄດ້ເຂົ້າໄປຫາແຜ່ນດິນ
ທາງເໜືອ; ແລະ ນີໄຟກັບລີໄຮກໍໄປຫາ

51 *ກ* ແອວ 31:5.
**6** 1 *ກ* ຮລມ 13:1.
2 *ກ* ຮມ 1:28–32.
3 *ກ* ຄມພ ຜູກມິດ.
4 *ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.

[ກ]ແຜ່ນດິນທາງເໜືອຄືກັນ ເພື່ອສັ່ງສອນຜູ້
ຄົນ. ແລະ ປີທີຫົກສິບສາມໄດ້ສິ້ນສຸດລົງ
ດັ່ງນີ້.
7 ແລະ ຈົ່ງ ເບິ່ງ, ມັນ ມີ ສັນ ຕິ ສຸກ ຢູ່ ທົ່ວ
ແຜ່ນ ດິນ ທັງ ໝົດ, ເຖິງ ຂະ ໜາດ ທີ່ ຊາວ
ນີໄຟສາມາດເຂົ້າໄປຫາແຜ່ນດິນສ່ວນໃດ
ກໍໄດ້ຕາມແຕ່ພວກເຂົາຕ້ອງການ ບໍ່ວ່າໃນ
ບັນດາຊາວນີໄຟ ຫລື ວ່າໃນບັນດາຊາວ
ເລມັນ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນຈະໄປບ່ອນໃດກໍໄດ້ ຕາມແຕ່ພວກ
ເຂົາຕ້ອງການຄືກັນ, ບໍ່ວ່າໃນບັນດາຊາວ
ເລມັນ ຫລື ໃນ ບັນດາຊາວ ນີໄຟ; ແລະ
ພວກ ເຂົາ ໄດ້ ມີການ ຕິດ ຕໍ່ກັນຢ່າງເປັນ
ອິດສະລະດັ່ງນີ້, ເພື່ອຊື້ ແລະ ເພື່ອຂາຍ,
ແລະ ເພື່ອຫາຜົນປະໂຫຍດ, ຕາມຄວາມ
ປາດຖະໜາຂອງໃຜລາວ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງ
ຊາວເລມັນ ແລະ ຊາວນີໄຟໄດ້ຮັ່ງມີເປັນດີ
ຢ່າງຍິ່ງ, ແລະ ພວກເຂົາໄດ້ມີຄຳ, ແລະ ມີ
ເງິນ, ແລະ ມີໂລຫະທີ່ມີຄຸນຄ່າຢ່າງຫລວງ
ຫລາຍ, ທັງໃນແຜ່ນດິນທາງໃຕ້ ແລະ ໃນ
ແຜ່ນດິນທາງເໜືອ.
10 ບັດ ນີ້ແຜ່ນດິນທາງໃຕ້ຖືກເອີ້ນວ່າ
ລີໄຮ, ແລະ ແຜ່ນດິນທາງເໜືອຖືກເອີ້ນວ່າ
[ກ]ມິວເລັກ, ເພາະເອີ້ນຕາມຊື່ລູກຊາຍຂອງ
ເຊເດກີຢາ; ເພາະພຣະເຈົ້າໄດ້ນຳເອົາມິວ
ເລັກເຂົ້າໄປຫາແຜ່ນດິນພາກເໜືອ, ແລະ
ລີໄຮເຂົ້າໄປຫາແຜ່ນດິນທາງໃຕ້.
11 ແລະ ຈົ່ງເບິ່ງ, ມັນໄດ້ມີຄຳຫລາຍຊະ
ນິດໃນແຜ່ນດິນທັງສອງບ່ອນ, ແລະ ເງິນ,
ແລະ ໂລຫະທີ່ມີຄ່າທຸກຊະນິດ; ແລະ ມີ
ນາຍຊ່າງທີ່ມີຝີມືປານິດນຳອີກ, ຊຶ່ງໄດ້ຕີ
ໂລຫະທຸກຊະນິດ; ແລະ ໄດ້ເຮັດໃຫ້ມັນ
ລະອຽດງາມດີ; ແລະ ພວກເຂົາໄດ້ກັບກາຍ
ເປັນຄົນຮັ່ງມີດັ່ງນີ້.
12 ພວກເຂົາໄດ້ປູກພືດພັນຢ່າງຫລວງ
ຫລາຍ, ທັງທາງເໜືອ ແລະ ທາງໃຕ້; ແລະ
ພວກ ເຂົາ ໄດ້ ມີຄວາມ ຈະ ເລີນ ຮຸ່ງເຮືອງ
ຢ່າງ ຍິ່ງ, ທັງ ທາງ ເໜືອ ແລະ ທາງ ໃຕ້.
ແລະ ພວກເຂົາໄດ້ມີຄົນເພີ່ມທະວີຂຶ້ນຢ່າງ
ຫລວງຫລາຍ ແລະ ເຂັ້ມແຂງຂຶ້ນຢ່າງຍິ່ງ
ໃນແຜ່ນດິນ. ແລະ ພວກເຂົາໄດ້ລ້ຽງສັດ
ຫລາຍຊະນິດຢ່າງຫລວງຫລາຍ, ແທ້ຈິງ
ແລ້ວ, ມັນໄດ້ອອກແມ່ແຜ່ລູກຢ່າງຫລວງ
ຫລາຍ.
13 ຈົ່ງ ເບິ່ງ ພວກ ຜູ້ ຍິງ ກໍ ໄດ້ ອອກ ແຮງ
ງານຢ່າງດຸໝັ່ນ ແລະ ເຂັນຝ້າຍ, ແລະ ໄດ້
ເຮັດຜ້າແພຫລາຍຊະນິດ, ຜ້າລີນິນຕ່ຳຢ່າງ
ດີ ແລະ ຜ້າທຸກຊະນິດ, ເພື່ອຈະໄດ້ປົກປິດ
ຄວາມເປືອຍເປົ່າຂອງພວກເຂົາ. ແລະ ປີທີ
ຫົກສິບສີ່ໄດ້ຜ່ານພົ້ນໄປຢ່າງສັນຕິດັ່ງນີ້.
14 ແລະ ໃນປີທີຫົກສິບຫ້າ ພວກເຂົາໄດ້
ມີຄວາມຜາສຸກ ແລະ ສັນຕິສຸກຢ່າງກວ້າງ
ຂວາງ, ແທ້ຈິງແລ້ວ, ມັນໄດ້ມີການສັ່ງສອນ
ຫລາຍຢ່າງ ແລະ ມີການທຳນາຍຫລາຍ
ຢ່າງກ່ຽວກັບສິ່ງທີ່ຈະມາເຖິງ. ແລະ ປີທີຫົກ
ສິບຫ້າກໍໄດ້ຜ່ານໄປດັ່ງນີ້.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີທີຫົກສິບຫົກແຫ່ງການປົກຄອງຂອງຜູ້
ຕັດສິນ, ຈົ່ງເບິ່ງ, [ກ]ຊີໂຊຣຳຖືກລອບຂ້າ
ໂດຍມືລຶກລັບໃນຂະນະທີ່ນັ່ງຢູ່ໃນບັນລັງ
ຕັດສິນ. ແລະ ເຫດການໄດ້ບັງເກີດຂຶ້ນຄື
ໃນປີດຽວກັນນັ້ນ, ຄືລູກຊາຍຂອງເພິ່ນ, ຜູ້
ທີ່ຖືກແຕ່ງຕັ້ງຂຶ້ນແທນກໍຖືກລອບຂ້າຄືກັນ.
ແລະ ປີທີຫົກສິບຫົກໄດ້ສິ້ນສຸດລົງດັ່ງນີ້.
16 ແລະ ໃນຕົ້ນປີທີຫົກສິບເຈັດ ຜູ້ຄົນ
ເລີ່ມເປັນຄົນຊົ່ວຄືນຄືເກົ່າ.

6 *ກ* ແຂວ 63:4–9; ຣລມ 3:11–12.
10 *ກ* ມຊຢ 25:2–4; ຣລມ 8:21.
15 *ກ* ຣລມ 5:1.

17 ເພາະ ຈົ່ງ ເບິ່ງ, ພຣະ ຜູ້ ເປັນ ເຈົ້າ ໄດ້ ປະທານພອນໃຫ້ແກ່ພວກເຂົາມາດົນແລ້ວ ດ້ວຍຂອງທີ່ມີຄຸນຄ່າທາງໂລກ ຈົນວ່າມັນບໍ່ ມີການຍຸຍົງໃຫ້ຄຽດແຄ້ນ, ໃຫ້ເຮັດສົງຄາມ, ຫລື ໃຫ້ຂ້າຟັນກັນ; ສະນັ້ນ ພວກເຂົາຈຶ່ງ ໄດ້ເລີ່ມໝົກໝຸ້ນຢູ່ກັບຂອງມີຄ່າຂອງພວກເຂົາ; ແທ້ຈິງແລ້ວ, ພວກເຂົາເລີ່ມພະຍາຍາມຫາຜົນປະໂຫຍດເພື່ອຕົນເອງຈະໄດ້ມີ ກຽດຕິຍົດສູງກວ່າຜູ້ອື່ນ; ສະນັ້ນ ພວກເຂົາ ຈຶ່ງເລີ່ມທຳການຄາດຕະກຳຢ່າງ [ກ]ລັບໆ, ແລະ ເລີ່ມລັກ, ແລະ ປຸ້ນຈີ້ເພື່ອຫາຜົນປະໂຫຍດ.

18 ແລະ ບັດນີ້ ຈົ່ງ ເບິ່ງ, ຄາດ ຕະ ກອນ ແລະ ພວກປຸ້ນຈີ້ເຫລົ່ານັ້ນເປັນພັກພວກ ທີ່ຄິດຕູເມັນ ແລະ [ກ]ແກດີອານທັນໄດ້ຕັ້ງຂຶ້ນ. ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ໃນບັນດາຊາວນີໄຟກໍມີພັກພວກຂອງແກດີອານທັນຢ່າງຫລວງຫລາຍ. ແຕ່ຈົ່ງເບິ່ງ, ມັນມີຈຳນວນຫລາຍກວ່າໃນບັນດາຊາວເລມັນພວກທີ່ຊົ່ວກວ່າ. ແລະ ພວກເຂົາຖືກ ເອີ້ນວ່າໂຈນ ແລະ ຄາດຕະກອນຂອງແກດີອານທັນ.

19 ແລະ ພວກເຂົາຄືພວກທີ່ໄດ້ລອບຂ້າ ຊີໂຊຣຳຜູ້ເປັນຫົວໜ້າຜູ້ຕັດສິນ ແລະ ລູກຊາຍຂອງເພິ່ນ, ໃນຂະນະທີ່ພວກເພິ່ນຢູ່ ໃນບັນລັງຕັດສິນ; ແລະ ຈົ່ງເບິ່ງ, ຊອກຫາ ພວກເຂົາບໍ່ພົບເລີຍ.

20 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ ຄື ເມື່ອຊາວເລມັນເຫັນວ່າ ມັນມີພວກໂຈນ ປະປົນຢູ່ໃນບັນດາພວກເຂົາເອງ ພວກເຂົາ ກໍເສົ້າສະຫລົດໃຈຫລາຍທີ່ສຸດ; ແລະ ພວກເຂົາໄດ້ໃຊ້ທຸກວິທີທາງ ແລະ ອຳນາດຂອງ ພວກເຂົາເພື່ອທຳລາຍພວກໂຈນເຫລົ່ານັ້ນ ໃຫ້ໝົດສິ້ນໄປຈາກຜືນແຜ່ນດິນໂລກ.

21 ແຕ່ຈົ່ງເບິ່ງ, ຊາຕານໄດ້ຍຸຍົງໃຈຂອງ ຊາວນີໄຟສ່ວນຫລາຍ, ເຖິງຂະໜາດທີ່ ພວກເຂົາໄດ້ເຂົ້າຮ່ວມກັບພວກໂຈນເຫລົ່ານັ້ນ, ແລະ ໄດ້ເຮັດພັນທະສັນຍາ ແລະ ຄຳສາບານກັບພວກເຂົາ, ວ່າພວກເຂົາຈະຄຸ້ມຄອງ ແລະ ປົກປັກຮັກສາພວກດຽວກັນ, ເຖິງແມ່ນຈະຢູ່ໃນສະພາບອັນຫຍຸ້ງຍາກ ໃດໆກໍຕາມທີ່ພວກໂຈນໄດ້ຮັບ, ເພື່ອພວກເຂົາຈະບໍ່ໄດ້ຮັບໂທດເພາະການຄາດຕະກຳຂອງພວກເຂົາ, ແລະ ການປຸ້ນຈີ້ຂອງ ພວກເຂົາ, ແລະ ການຂີ້ລັກມັກສົກຂອງ ພວກເຂົາ.

22 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ພວກເຂົາໄດ້ມີເຄື່ອງໝາຍຂອງພວກເຂົາເອງ, ແທ້ຈິງແລ້ວ, ເຄື່ອງໝາຍ [ກ]ລັບ ແລະ ຄຳ ເວົ້າ ລັບໆ ຂອງພວກເຂົາ; ແລະ ສິ່ງ ເຫລົ່ານີ້ຈະຊ່ວຍໃຫ້ພວກເຂົາຮູ້ຈັກພີ່ນ້ອງ ທີ່ເຂົ້າມາໃນພັນທະສັນຍາ, ເພື່ອຄວາມຊົ່ວຮ້າຍໃດໆກໍຕາມທີ່ພີ່ນ້ອງຂອງພວກເຂົາ ກະທຳ ເຂົາຈະບໍ່ຖືກພີ່ນ້ອງ ຫລື ຄົນທີ່ໄດ້ ເປັນຂອງພັກພວກຂອງຕົນທີ່ຮັບພັນທະສັນຍານີ້ທຳຮ້າຍ.

23 ແລະ ພວກເຂົາຈະໄດ້ຂ້າ, ແລະ ປຸ້ນຈີ້, ແລະ ລັກ, ແລະ ທຳການໂສເພນີ ແລະ ເຮັດຄວາມຊົ່ວຮ້າຍນາໆປະການດັ່ງນີ້, ກົງກັນຂ້າມກັບກົດໝາຍຂອງບ້ານເມືອງ ແລະ ກົດຂອງພຣະເຈົ້ານຳອີກ.

24 ແລະ ຜູ້ໃດກໍຕາມທີ່ຢູ່ໃນພັກພວກ ດຽວກັນເປີດເຜີຍ [ກ]ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງພັກພວກດຽວກັນ ໃຫ້ໂລກຮູ້ຈັກ, ຜູ້ນັ້ນຈະໄດ້ຮັບການຕັດສິນ ລົງໂທດ, ບໍ່ແມ່ນຕາມກົດໝາຍຂອງບ້ານເມືອງ, ແຕ່ເປັນກົດໝາຍອັນຊົ່ວຮ້າຍຊຶ່ງ ແກດີອານທັນ ແລະ ຄິດຕູເມັນໄດ້ຕັ້ງໄວ້.

---

17 ກ 3 ນຟ 9:9.
18 ກ ຮລມ 2:4, 12–13.
22 ກ ຄມພ ການມົ້ວສຸມລັບ.
24 ກ ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.

25 ບັດນີ້ ຈົ່ງເບິ່ງ, ມັນເປັນ [ກ]ຄຳສາບານ
ແລະ ພັນທະສັນຍາລັບ ຊຶ່ງແອວມາໄດ້ສັ່ງ
ລູກຂອງເພິ່ນໄວ້ວ່າ ບໍ່ໃຫ້ເອົາອອກໄປໃຫ້
ໂລກຮູ້, ເພາະຢ້ານວ່າມັນຈະເປັນທາງນຳ
ພາຜູ້ຄົນລົງໄປສູ່ຄວາມພິນາດ.
26 ບັດ ນີ້ ຈົ່ງ ເບິ່ງ, ແກດີອານທັນບໍ່ໄດ້
ເອົາຄຳສາບານ ແລະ ພັນທະສັນຍາ [ກ]ລັບ
ເຫລົ່ານັ້ນມາຈາກບັນທຶກທີ່ຖືກມອບໃຫ້ແກ່
ຮີລາມັນ; ແຕ່ຈົ່ງເບິ່ງ, ມັນຖືກເອົາເຂົ້າໃສ່
ໃນໃຈຂອງແກດີອານທັນໂດຍ [ຂ]ຜູ້ດຽວກັນ
ກັບຜູ້ທີ່ໄດ້ຊັກຊວນບິດາມານດາຜູ້ທຳອິດ
ຂອງພວກເຮົາໃຫ້ກິນໝາກໄມ້ທີ່ຕ້ອງຫ້າມ
ນັ້ນ—
27 ແທ້ ຈິງ ແລ້ວ, ມັນ ແມ່ນ ຜູ້ ດຽວ ກັນ ນີ້
ທີ່ ໄດ້ວາງແຜນກັບ [ກ]ກາອິນ, ວ່າຖ້າຫາກ
ລາວຂ້າອາເບັນຜູ້ເປັນນ້ອງຊາຍຂອງລາວ
ແລ້ວ ສິ່ງທີ່ລາວເຮັດໄປນັ້ນ ຈະບໍ່ເປັນທີ່ຮູ້
ຈັກແກ່ໂລກນີ້ເລີຍ. ແລະ ມັນໄດ້ວາງແຜນ
ກັບກາອິນ ແລະ ກັບຜູ້ເຊື່ອຟັງລາວນັບຕັ້ງ
ແຕ່ເວລານັ້ນມາ.
28 ແລະ ແມ່ນຜູ້ດຽວກັນນີ້ຄືກັນທີ່ໃສ່
ມັນໄວ້ໃນໃຈຂອງຜູ້ຄົນໃຫ້ [ກ]ສ້າງຫໍຄອຍ
ທີ່ສູງທີ່ສຸດເພື່ອພວກເຂົາຈະໄດ້ຂຶ້ນໄປເຖິງ
ສະຫວັນ. ແລະ ແມ່ນຜູ້ດຽວກັນນີ້ທີ່ຊັກນຳ
ຜູ້ຄົນຜູ້ທີ່ໜີມາຈາກຫໍຄອຍໃຫ້ເຂົ້າມາໃນ
ແຜ່ນດິນນີ້; ເພື່ອເຜີຍແຜ່ວຽກງານແຫ່ງ
ຄວາມມືດ ແລະ ຄວາມໜ້າກຽດຊັງໄປທົ່ວ
ແຜ່ນດິນ, ຈົນວ່າມັນໄດ້ລາກຜູ້ຄົນໄປສູ່
ຄວາມພິນາດ [ຂ]ໝົດສິ້ນ, ແລະ ໄປສູ່ນະລົກ
ອັນເປັນນິດ.
29 ແທ້ຈິງແລ້ວ, ແມ່ນຜູ້ດຽວກັນນີ້ທີ່ໃສ່
ມັນໄວ້ໃນໃຈຂອງ [ກ]ແກດີອານທັນສືບຕໍ່
ເຮັດວຽກງານແຫ່ງຄວາມມືດ, ແລະ ການ
ຄາດຕະກຳຢ່າງລັບໆຕໍ່ໄປ; ແລະ ມັນໄດ້
ນຳມັນອອກມານັບຕັ້ງແຕ່ການເລີ່ມຕົ້ນ
ຂອງມະນຸດ ຈົນເຖິງເວລານີ້.
30 ແລະ ຈົ່ງເບິ່ງ, ຜູ້ດຽວກັນນີ້ທີ່ [ກ]ສ້າງ
ບາບທັງປວງ. ແລະ ຈົ່ງເບິ່ງ, ມັນໄດ້ທຳ
ວຽກງານແຫ່ງຄວາມມືດ ແລະ ຄາດຕະກຳ
ລັບ, ແລະ ໄດ້ສົ່ງຕໍ່ແຜນການຂອງພວກ
ເຂົາ, ແລະ ຄຳສາບານຂອງພວກເຂົາ,
ແລະ ພັນທະສັນຍາຂອງພວກເຂົາ, ແລະ
ແຜນການອັນຊົ່ວຮ້າຍອັນເປັນຕາຢ້ານ
ຂອງພວກເຂົາຈາກລຸ້ນສູ່ລຸ້ນ ຕາມທີ່ມັນ
ຈະສາມາດຄອບຄອງໃຈຂອງລູກຫລານ
ມະນຸດໄດ້.
31 ແລະ ບັດນີ້ຈົ່ງເບິ່ງ, ມັນໄດ້ຄອບຄອງ
ໃຈຂອງຊາວນີໄຟໄດ້ຫລາຍ; ແທ້ຈິງແລ້ວ,
ເຖິງຂະໜາດທີ່ພວກເຂົາກັບມາເປັນຄົນ
ຊົ່ວທີ່ສຸດ; ແທ້ຈິງແລ້ວ, ພວກເຂົາສ່ວນ
ຫລາຍໄດ້ຫັນໄປຈາກທາງແຫ່ງຄວາມ
ຊອບທຳ, ແລະ ໄດ້ [ກ]ຢຽບຢ່ຳພຣະບັນຍັດ
ຂອງພຣະເຈົ້າໄວ້ໃຕ້ຕີນຂອງພວກເຂົາ,
ແລະ ໄດ້ຫັນໄປສູ່ທາງຂອງຕົນ, ແລະ ໄດ້
ສ້າງຮູບບູຊາຂຶ້ນໃຫ້ຕົນເອງດ້ວຍຄຳຂອງ
ພວກເຂົາ ແລະ ເງິນຂອງພວກເຂົາ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຄວາມຊົ່ວຮ້າຍທັງໝົດນີ້ໄດ້ມາຫາພວກ
ເຂົາໃນເວລາ [ກ]ບໍ່ເທົ່າໃດປີ, ເຖິງຂະໜາດ
ທີ່ສ່ວນຫລາຍຂອງມັນໄດ້ມາສູ່ພວກເຂົາ
ໃນປີທີຫົກສິບເຈັດແຫ່ງການປົກຄອງຂອງ
ຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.
33 ແລະ ພວກເຂົາໄດ້ເກັ່ງກ້າຂຶ້ນໃນ
ຄວາມຊົ່ວຮ້າຍຂອງພວກເຂົາໃນປີທີຫົກ

25 ກ ແອວ 37:27–32.
26 ກ ມຊ 5:29, 49–52.
ຂ 3 ນຟ 6:28;
ມຊ 4:6–12.
27 ກ ມຊ 5:18–33.
28 ກ ປຖກ 11:1–4; ອທ 1:3.
ຂ ອທ 8:9, 15–25.
29 ກ ຮລມ 2:4–13.
30 ກ ແອວ 5:39–42;
ມຣນ 7:12, 17; ມຊ 4:4.
31 ກ 1 ນຟ 19:7.
32 ກ ແອວ 46:8.

ສິບແປດນຳອີກ, ຈົນວ່າມັນເຮັດໃຫ້ຄົນທີ່ຊອບທຳເສົ້າສະຫລົດໃຈ ແລະ ຄ່ຳຄວນຢ່າງໃຫຍ່ຫລວງ.

34 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າຊາວນີໄຟໄດ້ເລີ່ມເສື່ອມໂຊມລົງຢູ່ໃນຄວາມບໍ່ເຊື່ອຖື, ແລະ ເກັ່ງກ້າຢູ່ໃນຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ, ໃນເວລາດຽວກັນຊາວເລມັນກັບມາເລີ່ມເຕີບໂຕຢ່າງຍິ່ງໃນຄວາມຮູ້ກ່ຽວກັບພຣະເຈົ້າຂອງພວກເຂົາ; ແທ້ຈິງແລ້ວ, ພວກເຂົາໄດ້ເລີ່ມຮັກສາຂໍ້ກຳນົດ ແລະ ພຣະບັນຍັດຂອງພຣະອົງ, ແລະ ເດີນຢູ່ໃນຄວາມຈິງ ແລະ ຊື່ຕົງຕໍ່ພຣະພັກຂອງພຣະອົງ.

35 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ເລີ່ມ [ກ]ຖອຍອອກຈາກຊາວນີໄຟແລ້ວ, ເພາະຄວາມຊົ່ວຮ້າຍ ແລະ ຄວາມແຂງກະດ້າງຂອງໃຈຂອງພວກເຂົາ.

36 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າພຣະຜູ້ເປັນເຈົ້າເລີ່ມຖອກເທພຣະວິນຍານຂອງພຣະອົງລົງມາເທິງຊາວເລມັນ, ເພາະຄວາມບອກລອນສອນງ່າຍ ແລະ ຄວາມເຕັມໃຈຂອງພວກເຂົາທີ່ຈະເຊື່ອໃນພຣະຄຳຂອງພຣະອົງ.

37 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ຕາມລ້າພວກໂຈນແກດີອານທັນ; ແລະ ພວກເຂົາໄດ້ສັ່ງສອນພຣະຄຳຂອງພຣະເຈົ້າຢູ່ໃນບັນດາພວກທີ່ຊົ່ວຫລາຍກວ່າ, ເຖິງຂະໜາດທີ່ພວກໂຈນເຫລົ່ານັ້ນໄດ້ຖືກທຳລາຍໃຫ້ສູນສິ້ນໄປຈາກບັນດາຊາວເລມັນ.

38 ແລະ ເຫດການໄດ້ບັງເກີດຂຶ້ນ ອີກດ້ານໜຶ່ງ ຄືຊາວນີໄຟໄດ້ຊຸກຍູ້ ແລະ ໄດ້ຊ່ວຍເຫລືອພວກເຂົາ, ໂດຍເລີ່ມຕົ້ນຈາກພວກທີ່ຊົ່ວຫລາຍກວ່າ, ຈົນວ່າພວກເຂົາໄດ້ແຜ່ຂະຫຍາຍໄປທົ່ວແຜ່ນດິນຂອງຊາວນີໄຟ, ແລະ ໄດ້ລໍ້ລວງຄົນຊອບທຳສ່ວນຫລາຍໃຫ້ລົງມາເຊື່ອໃນວຽກງານຂອງພວກເຂົາ ແລະ ມີສ່ວນໃນຂອງທີ່ລັກຂະໂມຍມາ, ແລະ ຮ່ວມກັບພວກເຂົາໃນການຄາດຕະກຳ ແລະ ການມົ້ວສຸມລັບຂອງພວກເຂົາ.

39 ແລະ ພວກເຂົາໄດ້ມີອຳນາດດຳເນີນການປົກຄອງແຕ່ຝ່າຍດຽວ, ເຖິງຂະໜາດທີ່ພວກເຂົາໄດ້ຢຽບຢ່ຳໄວ້ໃຕ້ຕີນຂອງພວກເຂົາ ແລະ ໄດ້ຊ້ຽນຕີ ແລະ ໄດ້ຫັນຫລັງໃສ່ຜູ້ທີ່ [ກ]ທຸກຍາກລຳບາກ ແລະ ອ່ອນນ້ອມ, ແລະ ຜູ້ຕິດຕາມທີ່ຖ່ອມຕົວຂອງພຣະເຈົ້າ.

40 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າພວກເຂົາໄດ້ຕົກຢູ່ໃນສະພາບອັນເປັນຕາຢ້ານ, ແລະ ກຳລັງ [ກ]ສຸກເພື່ອຄວາມພິນາດອັນເປັນນິດ.

41 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີຫົກສິບແປດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

---

ຄຳທຳນາຍຂອງນີໄຟ, ລູກຊາຍຂອງຮີລາມັນ—ພຣະເຈົ້ານາບຂູ່ຜູ້ຄົນຂອງນີໄຟວ່າພຣະອົງຈະສະເດັດມາຢ້ຽມຢາມພວກເຂົາດ້ວຍພຣະພິໂລດຂອງພຣະອົງ, ແລະ ຈະທຳລາຍພວກເຂົາໃຫ້ພິນາດໄປ ຖ້າຫາກພວກເຂົາບໍ່ກັບໃຈຈາກຄວາມຊົ່ວຮ້າຍຂອງພວກເຂົາ. ພຣະເຈົ້າລົງໂທດຜູ້ຄົນ

---

35 *ກ* ມຊຢ 2:36; ຄພ 121:37.
39 *ກ* ພສສ 109:16; ແອວ 5:54–56; ຄພ 56:16.
40 *ກ* ຣອມ 5:2; 11:37; ຄພ 18:6.

ຂອງນີໄຟດ້ວຍພະຍາດໂລຄາ; ພວກເຂົາ
ກັບໃຈ ແລະ ຫັນມາຫາພຣະອົງ. ຊາມູເອນ,
ຄົນເລມັນ, ທຳນາຍແກ່ຊາວນີໄຟ.

*ມີຢູ່ໃນບົດທີ 7 ຈົນເຖິງບົດທີ 16.*

## ບົດທີ 7

*ນີໄຟຖືກປະຕິເສດຢູ່ທາງເໜືອ ແລະ ໄດ້ກັບຄືນມາເຊຣາເຮັມລາ—ເພິ່ນອະທິຖານຢູ່ເທິງຫໍສູງຢູ່ໃນສວນຂອງເພິ່ນ ແລະ ເອີ້ນໃຫ້ຜູ້ຄົນກັບໃຈ ຖ້າບໍ່ດັ່ງນັ້ນພວກເຂົາຈະຕາຍ. ປະມານ 23–21 ປີ ກ່ອນ ຄ.ສ.*

1 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ
ໃນປີທີຫົກສິບເກົ້າແຫ່ງການປົກຄອງຂອງ
ຜູ້ຕັດສິນດູແລ ຜູ້ຄົນຂອງນີໄຟ, ຄືນີໄຟ
ລູກຊາຍຂອງຮີລາມັນໄດ້ [a]ກັບມາຈາກ
ແຜ່ນດິນທາງເໜືອ ມາຫາແຜ່ນດິນເຊຣາ
ເຮັມລາ.
2 ເພາະວ່າເພິ່ນໄດ້ອອກໄປຫາບັນດາ
ຜູ້ຄົນ ຊຶ່ງຢູ່ໃນແຜ່ນດິນທາງເໜືອ, ແລະ
ໄດ້ສັ່ງສອນພຣະຄຳຂອງພຣະເຈົ້າໃຫ້ແກ່
ພວກເຂົາ, ແລະ ໄດ້ທຳນາຍຫລາຍເລື່ອງ
ຕໍ່ພວກເຂົາ;
3 ແລະ ພວກເຂົາໄດ້ປະຕິເສດຄຳເວົ້າ
ທັງໝົດຂອງເພິ່ນ, ເຖິງຂະໜາດທີ່ເພິ່ນຢູ່
ໃນບັນດາພວກເຂົາບໍ່ໄດ້, ແຕ່ໄດ້ກັບຄືນ
ມາຫາແຜ່ນດິນອັນເປັນບ້ານເກີດເມືອງ
ນອນຂອງເພິ່ນ.
4 ແລະ ໂດຍທີ່ເຫັນວ່າຜູ້ຄົນຕົກຢູ່ໃນ
ສະພາບແຫ່ງຄວາມຊົ່ວຮ້າຍອັນເປັນຕາ
ຢ້ານ, ແລະ ພວກໂຈນແກດີອານທັນເຫລົ່າ
ນັ້ນໄດ້ຂຶ້ນຄອງບັນລັງຕັດສິນ—ຍາດແຍ່ງ
ເອົາອຳນາດ ແລະ ສິດອຳນາດຂອງແຜ່ນ
ດິນໄປ; ເມີນເສີຍຕໍ່ພຣະບັນຍັດຂອງພຣະ
ເຈົ້າ, ແລະ ກະທຳສິ່ງທີ່ບໍ່ຖືກຕ້ອງຕໍ່ພຣະ
ພັກຂອງພຣະອົງ; ແລະ ບໍ່ໃຫ້ຄວາມຍຸດຕິ
ທຳແກ່ລູກຫລານມະນຸດ;
5 ກ່າວໂຈມຕີຄົນຊອບທຳ ເພາະຄວາມ
ຊອບທຳຂອງພວກເຂົາ; ປ່ອຍຄົນຜິດ ແລະ
ຄົນຊົ່ວໄປໂດຍບໍ່ລົງໂທດເພາະເງິນຂອງ
ພວກເຂົາ; ແລະ ຍິ່ງໄປກວ່ານັ້ນ ຍັງໄດ້ຢູ່
ໃນຕຳແໜ່ງຫົວໜ້າຝ່າຍຜູ້ປົກຄອງເພື່ອ
ປົກຄອງ ແລະ ເຮັດຕາມຄວາມປະສົງຂອງ
ຕົນ, ເພື່ອພວກເຂົາຈະໄດ້ຫາຜົນປະໂຫຍດ
ແລະ ການຍ້ອງຍໍສັນລະເສີນທາງ [a]ໂລກ
ແລະ ຍິ່ງໄປກວ່ານັ້ນ, ເພື່ອພວກເຂົາຈະໄດ້
ຫລິ້ນຊູ້, ແລະ ລັກສິ່ງຂອງ, ແລະ ເຮັດການ
ຄາດຕະກຳ, ແລະ ເຮັດຕາມຄວາມປະສົງ
ຂອງພວກເຂົາໄດ້ຢ່າງສະບາຍ—
6 ບັດນີ້ຄວາມຊົ່ວຮ້າຍອັນໃຫຍ່ຫລວງ
ນີ້ໄດ້ມາສູ່ຊາວນີໄຟໃນເວລາບໍ່ເທົ່າໃດປີ;
ແລະ ເວລານີໄຟໄດ້ເຫັນສິ່ງເຫລົ່ານີ້, ໃຈ
ຂອງເພິ່ນກໍບວມຊ້ຳດ້ວຍຄວາມເສົ້າສະ
ຫລົດຢູ່ພາຍໃນຫົວອົກຂອງເພິ່ນ; ແລະ
ເພິ່ນໄດ້ຮ້ອງຂຶ້ນດ້ວຍຄວາມເຈັບປວດ
ຂອງຈິດວິນຍານຂອງເພິ່ນວ່າ:
7 ໂອ້, ຖ້າຫາກຂ້ານ້ອຍໄດ້ຢູ່ໃນວັນ
ເວລາຂອງສະໄໝທີ່ນີໄຟບັນພະບຸລຸດ
ຂອງຂ້ານ້ອຍຫາກໍ່ອອກມາຈາກແຜ່ນດິນ
ເຢຣູຊາເລັມ, ຂ້ານ້ອຍກໍຈະປິຕິຍິນດີກັບ
ເພິ່ນໃນແຜ່ນດິນແຫ່ງຄຳສັນຍາ; ເພາະ
ວ່າເວລານັ້ນຜູ້ຄົນຂອງເພິ່ນເປັນຄົນບອກ
ລອນສອນງ່າຍ, ໝັ້ນຄົງທີ່ຈະຮັກສາພຣະ
ບັນຍັດຂອງພຣະເຈົ້າ, ແລະ ຊ້າທີ່ຈະນຳ
ໄປໃຫ້ເຮັດຄວາມຊົ່ວຮ້າຍ; ແລະ ພວກເຂົາ
ວ່ອງໄວທີ່ຈະເຊື່ອຟັງພຣະຄຳຂອງພຣະຜູ້
ເປັນເຈົ້າ—

**7** 1*a* ຮລມ 6:6.

5*a* ມທ 13:22; 16:26.

8 ແທ້ຈິງແລ້ວ, ຖ້າຫາກຂ້ານ້ອຍໄດ້ຢູ່ໃນສະໄໝນັ້ນ, ແລ້ວຈິດວິນຍານຂອງຂ້ານ້ອຍກໍຄົງມີແຕ່ຄວາມຜາສຸກຢູ່ໃນຄວາມຊອບທຳຂອງພີ່ນ້ອງຂອງຂ້ານ້ອຍ.

9 ແຕ່ ຈົ່ງເບິ່ງ, ຂ້ານ້ອຍຍອມຮັບວ່າ ນີ້ເປັນເວລາຂອງຂ້ານ້ອຍ, ແລະ ວ່າຈິດວິນຍານຂອງຂ້ານ້ອຍເຕັມໄປດ້ວຍຄວາມເສົ້າສະຫລົດໃຈ ເພາະຄວາມຊົ່ວຮ້າຍນີ້ຂອງພີ່ນ້ອງຂອງຂ້ານ້ອຍ.

10 ແລະ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ມັນເກີດຂຶ້ນຢູ່ທີ່ຫໍສູງຢູ່ໃນສວນຂອງນີໄຟ, ຊຶ່ງຢູ່ແຄມທາງຫລວງທີ່ນຳໄປຫາຕະຫລາດໃຫຍ່, ຊຶ່ງຕັ້ງຢູ່ໃນເມືອງເຊຣາເຮັມລາ; ສະນັ້ນ, ນີໄຟຈຶ່ງໄດ້ກົ້ມຂາບລົງຢູ່ເທິງຫໍສູງຢູ່ໃນສວນຂອງເພິ່ນ, ຊຶ່ງຫໍສູງນັ້ນຕັ້ງຢູ່ໃກ້ປະຕູສວນແຄມທາງຫລວງ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີພວກຜູ້ຊາຍຈຳນວນໜຶ່ງຜ່ານມາເຫັນນີໄຟຢູ່ເທິງຫໍສູງໃນຂະນະທີ່ເພິ່ນກຳລັງຫຸ້ມເທຈິດວິນຍານຂອງເພິ່ນໄວ້ກັບພຣະເຈົ້າ; ແລະ ພວກເຂົາໄດ້ແລ່ນໄປບອກຜູ້ຄົນເຖິງສິ່ງທີ່ພວກເຂົາໄດ້ເຫັນ, ແລະ ຜູ້ຄົນກໍໄດ້ມາເຕົ້າໂຮມກັນເປັນຝູງໃຫຍ່ ເພື່ອຈະໄດ້ຮູ້ຈັກສາເຫດຂອງການເປັນທຸກອັນໃຫຍ່ຫລວງເຊັ່ນນັ້ນ ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ.

12 ແລະ ບັດນີ້, ເມື່ອນີໄຟລຸກຂຶ້ນ ເພິ່ນກໍໄດ້ເຫັນຝູງຊົນມາເຕົ້າໂຮມກັນຢູ່.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ເປີດປາກ ແລະ ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງ, [ກ]ເປັນຫຍັງພວກທ່ານຈຶ່ງມາເຕົ້າໂຮມກັນຢູ່ນີ້? ເພື່ອຂ້າພະເຈົ້າຈະໄດ້ບອກພວກທ່ານເຖິງຄວາມຊົ່ວຮ້າຍຂອງພວກທ່ານບໍ?

14 ແທ້ຈິງແລ້ວ, ຂ້າພະເຈົ້າຂຶ້ນມາເທິງຫໍສູງນີ້ກໍເພື່ອວ່າຂ້າພະເຈົ້າຈະໄດ້ຫຸ້ມເທຈິດວິນຍານຂອງຂ້າພະເຈົ້າໄວ້ກັບພຣະເຈົ້າຂອງຂ້າພະເຈົ້າ, ເພາະຄວາມເສົ້າສະຫລົດຍິ່ງຂອງໃຈຂ້າພະເຈົ້າ ຊຶ່ງເປັນເພາະຄວາມຊົ່ວຮ້າຍຂອງພວກທ່ານ!

15 ແລະ ເປັນຍ້ອນຄວາມເປັນທຸກ ແລະ ການຄ່ຳຄວນຂອງຂ້າພະເຈົ້າ ພວກທ່ານຈຶ່ງໄດ້ມາເຕົ້າໂຮມກັນ, ແລະ ແປກໃຈ; ແທ້ຈິງແລ້ວ, ພວກທ່ານສົມຄວນທີ່ຈະແປກໃຈ; ແທ້ຈິງແລ້ວ, ພວກທ່ານຄວນແປກໃຈເພາະພວກທ່ານໄດ້ປ່ອຍຕົວໃຫ້ມານຄອບຄອງໃຈຂອງພວກທ່ານຢ່າງກວ້າງຂວາງເຊັ່ນນີ້.

16 ແທ້ຈິງແລ້ວ, ເປັນດ້ວຍເຫດໃດພວກທ່ານ ຈຶ່ງປ່ອຍຕົວຂອງພວກທ່ານໃຫ້ແກ່ການຊັກຈູງຂອງມັນ ຜູ້ທີ່ພະຍາຍາມທີ່ຈະເອົາຈິດວິນຍານຂອງພວກທ່ານໂຍນລົງໄປສູ່ຄວາມທຸກທໍລະມານອັນເປັນນິດ ແລະ ໄປສູ່ຄວາມຈິບຫາຍອັນບໍ່ມີສິ້ນສຸດ?

17 ໂອ້ ພວກທ່ານຈົ່ງກັບໃຈ, ພວກທ່ານຈົ່ງກັບໃຈເຖີດ! ເປັນ [ກ]ດ້ວຍເຫດໃດພວກທ່ານຈຶ່ງຢາກຕາຍ? ຈົ່ງຫັນມາ, ຫັນມາຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກທ່ານເຖີດ. ເປັນດ້ວຍເຫດໃດພຣະອົງຈຶ່ງປະຖິ້ມພວກທ່ານ?

18 ເປັນຍ້ອນວ່າພວກທ່ານເຮັດໃຈແຂງກະດ້າງ; ແທ້ຈິງແລ້ວ, ພວກທ່ານບໍ່ເຊື່ອຟັງສຸລະສຽງຂອງ [ກ]ຜູ້ລ້ຽງທີ່ດີ; ແທ້ຈິງແລ້ວ, ພວກທ່ານໄດ້ [ຂ]ກໍ່ກວນໃຫ້ພຣະອົງພຣະພິໂລດໃຫ້ພວກທ່ານ.

13 ກ ມທ 3:5–8.
17 ກ ອຊກ 18:23, 31–32.
18 ກ ອຊກ 34:12; ຢຣ 10:14–16; ແອວ 5:38–41, 57–60. ຄມພ ຜູ້ລ້ຽງທີ່ດີ.
ຂ ຢຄ 1:8; ແອວ 12:36–37.

19 ແລະ ຈົ່ງເບິ່ງ, ແທນທີ່ຈະ [ກ]ເຕົ້າໂຮມ
ພວກທ່ານ, ຖ້າຫາກພວກທ່ານບໍ່ກັບໃຈ,
ຈົ່ງເບິ່ງ, ພຣະອົງຈະເຮັດໃຫ້ພວກທ່ານກະ
ຈັດກະຈາຍໄປ ຈົນວ່າພວກທ່ານຈະກັບ
ກາຍມາເປັນຕ່ອນຊີ້ນສຳລັບໝາ ແລະ ສັດ
ປ່າ.
20 ໂອ້, ພວກທ່ານ ລືມ ພຣະ ເຈົ້າ ຂອງ
ພວກທ່ານໄດ້ແນວໃດ ທັງໆທີ່ໃນມື້ນັ້ນເອງ
ທີ່ພຣະອົງໄດ້ປົດປ່ອຍພວກທ່ານອອກມາ?
21 ແຕ່ຈົ່ງເບິ່ງ, ມັນເປັນໄປເພື່ອຫາຜົນ
ປະໂຫຍດ, ເພື່ອໃຫ້ຄົນຍ້ອງຍໍສັນລະເສີນ,
ແທ້ຈິງແລ້ວ, ແລະ ເພື່ອພວກທ່ານຈະໄດ້
ຄຳ ແລະ ເງິນ. ແລະ ພວກທ່ານໄດ້ໝົກ
ໝຸ້ນຢູ່ກັບຂອງມີຄຸນຄ່າ ແລະ ສິ່ງທີ່ບໍ່ມີປະ
ໂຫຍດຂອງ [ກ]ໂລກນີ້, ເພື່ອສິ່ງເຫລົ່ານັ້ນ
ພວກທ່ານຈຶ່ງຂ້າ, ແລະ ປຸ້ນຈີ້, ແລະ ລັກ,
ແລະ ເປັນ [ຂ]ພະຍານເທັດປັກປຳເພື່ອນ
ບ້ານຂອງພວກທ່ານ, ແລະ ເຮັດຄວາມຊົ່ວ
ຮ້າຍນາໆປະການ.
22 ແລະ ເປັນຍ້ອນເຫດນີ້ ຄວາມຈິບ
ຫາຍຈະມາສູ່ພວກທ່ານຖ້າຫາກພວກທ່ານ
ບໍ່ກັບໃຈ. ແຕ່ຖ້າຫາກພວກທ່ານບໍ່ກັບໃຈ,
ຈົ່ງເບິ່ງ, ເມືອງໃຫຍ່ນີ້ ແລະ ເມືອງໃຫຍ່
ຕ່າງໆຊຶ່ງຢູ່ອ້ອມແອ້ມນີ້ ທີ່ພວກເຮົາເປັນ
ເຈົ້າຂອງຈະຖືກຍຶດເອົາໄປ, ຈົນວ່າພວກ
ທ່ານບໍ່ມີບ່ອນຢູ່ອາໄສ; ຈົ່ງເບິ່ງ, ພຣະຜູ້
ເປັນເຈົ້າຈະບໍ່ປະທານ [ກ]ພະລັງໃຫ້ແກ່
ພວກທ່ານຄືກັນກັບຕອນທີ່ພຣະອົງເຄີຍ
ໄດ້ປະທານມາແລ້ວແຕ່ກ່ອນ ເພື່ອໃຫ້
ພວກທ່ານຢືນຕໍ່ສູ້ກັບສັດຕູຂອງພວກທ່ານ
ໄດ້.
23 ເພາະ ຈົ່ງ ເບິ່ງ, ພຣະ ຜູ້ ເປັນ ເຈົ້າ ໄດ້
ກ່າວດັ່ງນີ້: ເຮົາຈະບໍ່ສະແດງພະລັງຂອງ
ເຮົາແກ່ຄົນທີ່ຊົ່ວ, ແກ່ຄົນໜຶ່ງຫລາຍກວ່າ
ອີກຄົນໜຶ່ງ, ຖ້າຫາກເຂົາບໍ່ກັບ ໃຈ ຈາກ
ບາບຂອງເຂົາ, ແລະ ເຊື່ອຟັງຄຳຂອງເຮົາ.
ບັດນີ້ ສະນັ້ນ, ພີ່ນ້ອງຂອງຂ້າພະເຈົ້າເອີຍ,
ຂ້າພະເຈົ້າຢາກໃຫ້ພວກທ່ານເຫັນວ່າຈະ
ເປັນ [ກ]ການດີສຳລັບຊາວເລມັນຫລາຍ
ກວ່າພວກທ່ານ ຖ້າຫາກພວກທ່ານບໍ່ກັບ
ໃຈ.
24 ເພາະ ຈົ່ງ ເບິ່ງ, ພວກ ເຂົາ ມີ ຄວາມ
ຊອບທຳຫລາຍກວ່າພວກທ່ານ, ເພາະວ່າ
ພວກເຂົາບໍ່ໄດ້ເຮັດບາບຕ້ານຄວາມຮູ້ອັນ
ຍິ່ງໃຫຍ່ຊຶ່ງພວກທ່ານໄດ້ຮັບມາ; ສະນັ້ນ
ພຣະຜູ້ເປັນເຈົ້າຈະເມດຕາປານີພວກເຂົາ;
ແທ້ຈິງແລ້ວ, ພຣະອົງຈະເຮັດໃຫ້ວັນເວລາ
ຂອງພວກເຂົາ [ກ]ຍືດຍາວອອກໄປຕື່ມອີກ
ແລະ ຈະເພີ່ມຈຳນວນລູກຫລານຂອງພວກ
ເຂົາໃຫ້ຫລາຍຂຶ້ນ, ໃນຂະນະທີ່ພວກທ່ານ
ຈະຖືກ [ຂ]ທຳລາຍໃຫ້ໝົດສິ້ນໄປ ຖ້າຫາກ
ພວກທ່ານບໍ່ກັບໃຈ.
25 ແທ້ ຈິງ ແລ້ວ, ວິບັດ ແກ່ ພວກ ທ່ານ
ເພາະຄວາມໜ້າກຽດຊັງອັນໃຫຍ່ຫລວງນີ້
ຊຶ່ງມີຢູ່ໃນບັນດາພວກທ່ານ; ແລະ ພວກ
ທ່ານໄດ້ຮ່ວມຕົວເຂົ້າກັບມັນ, ແທ້ຈິງແລ້ວ,
ພວກທ່ານໄດ້ຮ່ວມຕົວເຂົ້າກັບພັກ [ກ]ລັບນັ້ນ
ຊຶ່ງແກດີອານທັນເປັນຜູ້ຈັດຕັ້ງຂຶ້ນ!
26 ແທ້ຈິງແລ້ວ, [ກ]ວິບັດຈະມາເຖິງພວກ
ທ່ານ ເພາະຄວາມທະນົງຕົວ ຊຶ່ງພວກທ່ານ
ຍອມໃຫ້ມັນເຂົ້າມາໃນໃຈຂອງພວກທ່ານ,
ຈົນເຮັດໃຫ້ພວກທ່ານໄຝ່ຝັນເໜືອກວ່າສິ່ງ
ທີ່ດີງາມ ເພາະ [ຂ]ສິ່ງມີຄ່າອັນຫລວງຫລາຍ
ຂອງພວກທ່ານ!

19 *ກ* 3 ນຟ 10:4–7.
21 *ກ* ຄມພ ຄວາມເປັນ
ຢູ່ທາງໂລກ.
*ຂ* ອພຍ 20:16;
ມທ 15:19–20.
22 *ກ* ມຊຢ 7:29.
23 *ກ* ຣລມ 15:11–15.
24 *ກ* ແອວ 9:16; ຄພ 5:33.
*ຂ* ແອວ 9:19.
25 *ກ* ຣລມ 3:23.
26 *ກ* ອຊຢ 5:8–25.
*ຂ* ຢຄ 2:13.

27 ແທ້ ຈິງ ແລ້ວ, ວິບັດ ແກ່ ພວກ ທ່ານ
ເພາະຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດ
ຊັງຂອງພວກທ່ານ!
28 ແລະ ຖ້າ ຫາກ ພວກ ທ່ານ ບໍ່ ກັບ ໃຈ,
ພວກ ທ່ານ ຈະ ຕ້ ອງ ຕາຍ; ແ ທ້ ຈິງ ແ ລ້ວ,
ແຜ່ນດິນຂອງພວກທ່ານຈະຖືກຍຶດເອົາໄປ
ແລະ ພວກທ່ານ ຈະ ຖືກທຳ ລາຍ ໄປ ຈາກ
ພື້ນແຜ່ນດິນໂລກ.
29 ຈົ່ງເບິ່ງ ບັດນີ້, ຂ້າພະເຈົ້າບໍ່ໄດ້ກ່າວ
ດ້ວຍຕົວຂ້າພະເຈົ້າເອງ, ເພາະວ່າຂ້າພະ
ເຈົ້າບໍ່ໄດ້ຮູ້ເລື່ອງເຫລົ່ານີ້ດ້ວຍຕົວຂ້າພະ
ເຈົ້າ ເອງ; ແຕ່ ຈົ່ງເບິ່ງ, ຂ້າ ພະ ເຈົ້າ [ກ]ຮູ້ວ່າ
ເລື່ອງເຫລົ່ານີ້ເປັນຄວາມຈິງເພາະອົງພຣະ
ຜູ້ເປັນເຈົ້າໄດ້ກະທຳໃຫ້ຂ້າພະເຈົ້າຮູ້ຈັກ,
ສະນັ້ນຂ້າພະເຈົ້າຈຶ່ງໃຫ້ຖ້ອຍຄຳວ່າ ມັນ
ຈະເກີດຂຶ້ນ.

## ບົດທີ 8

*ບັນດາຜູ້ຕັດສິນທີ່ເສື່ອມຊາມພະຍາຍາມທີ່ຈະຍຸຍົງຜູ້ຄົນໃຫ້ຕໍ່ຕ້ານນີໄຟ—ອັບຣາຮາມ, ໂມເຊ, ຊີນັດ, ຊີໂນກ, ອີໄຊອັດ, ເອຊາຢາ, ເຢເຣມີຢາ, ລີໄຮ, ແລະ ນີໄຟຕ່າງກໍໄດ້ໃຫ້ຖ້ອຍຄຳເຖິງພຣະຄຣິດ—ໂດຍການດົນໃຈ ນີໄຟປະກາດເຖິງການຄາດຕະກຳຫົວໜ້າຜູ້ຕັດສິນ. ປະມານ 23–21 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເວລານີໄຟກ່າວຂໍ້ຄວາມນີ້ແລ້ວ, ຈົ່ງເບິ່ງ,
ມີຄົນທີ່ເປັນຜູ້ຕັດສິນຊຶ່ງເປັນຂອງພັກລັບ
ຂອງແກດີອານທັນ, ແລະ ພວກເຂົາຄຽດ
ແຄ້ນ ແລະ ພວກ ເຂົາ ໄດ້ຮ້ອງ ຂັດຄ້ານ
ເພິ່ນ, ໂດຍການຮ້ອງຕໍ່ຜູ້ຄົນວ່າ: ເປັນຫຍັງ
ພວກທ່ານຈຶ່ງບໍ່ຈັບເອົາຄົນຜູ້ນີ້ ແລະ ເອົາ
ລາວມາເພື່ອຈະໄດ້ກ່າວໂທດລາວຕາມ
ຄວາມຜິດທີ່ລາວເຮັດມາ?
2 ເປັນດ້ວຍເຫດໃດພວກທ່ານຍັງເບິ່ງ
ແລະ ຟັງຄົນຜູ້ນີ້ໝິ່ນປະໝາດຜູ້ຄົນພວກນີ້
ແລະ ຕໍ່ຕ້ານກົດໝາຍຂອງພວກເຮົາຢູ່?
3 ເພາະຈົ່ງເບິ່ງ, ນີໄຟໄດ້ເວົ້າກັບພວກ
ເຂົາກ່ຽວກັບການເສື່ອມໂຊມຂອງກົດ
ໝາຍຂອງພວກເຂົາ; ແທ້ຈິງແລ້ວ, ນີໄຟ
ໄດ້ເວົ້າຫລາຍເລື່ອງຊຶ່ງຂຽນໄວ້ບໍ່ໄດ້; ແລະ
ບໍ່ມີສິ່ງໃດທີ່ເພິ່ນໄດ້ກ່າວໄປກົງກັນຂ້າມ
ກັບພຣະບັນຍັດຂອງພຣະເຈົ້າ.
4 ແລະ ຜູ້ຕັດສິນເຫລົ່ານັ້ນຄຽດແຄ້ນໃຫ້
ເພິ່ນຍ້ອນວ່າເພິ່ນໄດ້ [ກ]ເວົ້າຢ່າງແຈ່ມແຈ້ງ
ກັບພວກເຂົາກ່ຽວກັບວຽກງານລັບແຫ່ງ
ຄວາມມືດຂອງພວກເຂົາ; ເຖິງຢ່າງໃດກໍ
ຕາມ, ພວກເຂົາຍັງບໍ່ກ້າຈັບເພິ່ນເພາະ
ຄວາມຢ້ານກົວວ່າຜູ້ຄົນຈະຮ້ອງຂັດຄ້ານ
ພວກເຂົາ.
5 ສະນັ້ນ ພວກເຂົາຈຶ່ງໄດ້ຮ້ອງຕໍ່ຜູ້ຄົນ,
ມີຄວາມວ່າ: ດ້ວຍເຫດໃດພວກທ່ານຈຶ່ງ
ຍອມໃຫ້ຄົນຜູ້ນີ້ໝິ່ນປະໝາດພວກເຮົາ?
ເພາະຈົ່ງເບິ່ງ, ລາວໄດ້ກ່າວໂທດໃສ່ຜູ້ຄົນ
ພວກນີ້ທັງໝົດຈົນເຖິງຄວາມພິນາດ; ແທ້
ຈິງແລ້ວ, ແລະ ເວົ້າວ່າເມືອງໃຫຍ່ເຫລົ່ານີ້
ຂອງພວກເຮົາຈະຖືກຍຶດເອົາໄປຈາກພວກ
ເຮົານຳອີກ, ວ່າພວກເຮົາຈະບໍ່ມີບ່ອນຢູ່ອາ
ໄສໃນນັ້ນ.
6 ແລະ ບັດນີ້ພວກເຮົາຮູ້ຈັກວ່າມັນເປັນ
ໄປບໍ່ໄດ້, ເພາະຈົ່ງເບິ່ງ, ພວກເຮົາມີກຳລັງ
ອັນເຂັ້ມແຂງ, ແລະ ເມືອງຂອງພວກເຮົາກໍ
ຍິ່ງໃຫຍ່, ສະນັ້ນ ສັດຕູຂອງພວກເຮົາຈະມີ
ກຳລັງເໜືອກວ່າພວກເຮົາບໍ່ໄດ້.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ຍຸຍົງໃຫ້ຜູ້ຄົນຄຽດແຄ້ນໃຫ້ນີໄຟດັ່ງ

29 *ກ* ແອວ 5:45–46.

**8** 4 *ກ* 1 ນຟ 16:2–3.

ນີ້, ແລະ ເຮັດໃຫ້ເກີດການຂັດແຍ້ງກັນຂຶ້ນ
ໃນບັນດາພວກ ເຂົາ; ເພາະວ່າມີບາງ ຄົນ
ໄດ້ຮ້ອງຂຶ້ນວ່າ, ຢ່າຫຍຸ້ງກັບ ຄົນ ຜູ້ນີ້ເລີຍ
ເພາະວ່າເພິ່ນເປັນຄົນດີ, ແລະ ເລື່ອງທັງ
ໝົດທີ່ເພິ່ນໄດ້ກ່າວມານັ້ນຈະເກີດຂຶ້ນຢ່າງ
ແນ່ນອນ ຖ້າຫາກພວກເຮົາບໍ່ກັບໃຈ;
8 ແທ້ຈິງແລ້ວ, ຈົ່ງເບິ່ງ, ການຕັດສິນທັງ
ໝົດຊຶ່ງເພິ່ນໄດ້ໃຫ້ຖ້ອຍຄຳແກ່ພວກເຮົາ
ຈະມາຫາພວກເຮົາ; ເພາະວ່າພວກເຮົາ
ຮູ້ຈັກວ່າ ເພິ່ນໄດ້ໃຫ້ຖ້ອຍຄຳທີ່ຖືກຕ້ອງ
ຕໍ່ພວກເຮົາກ່ຽວກັບຄວາມຊົ່ວຮ້າຍຂອງ
ພວກເຮົາ. ແລະ ຈົ່ງເບິ່ງ ມັນມີຢູ່ຢ່າງຫລວງ
ຫລາຍ, ແລະ ເພິ່ນ [ກ]ຮູ້ຈັກເລື່ອງທັງໝົດທີ່
ຈະເກີດກັບພວກເຮົາເຊັ່ນດຽວກັບທີ່ເພິ່ນຮູ້
ຈັກເຖິງຄວາມຊົ່ວຮ້າຍຂອງພວກເຮົາ;
9 ແທ້ຈິງແລ້ວ, ແລະ ຈົ່ງເບິ່ງ, ຖ້າຫາກ
ເພິ່ນບໍ່ໄດ້ເປັນສາດສະດາແລ້ວ ເພິ່ນຈະບໍ່
ສາມາດໃຫ້ຖ້ອຍຄຳກ່ຽວກັບເລື່ອງເຫລົ່ານີ້
ໄດ້ດອກ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນ
ທີ່ພະຍາຍາມທຳລາຍນີໄຟ ຈຶ່ງຖືກບັງຄັບບໍ່
ໃຫ້ຈັບນີໄຟ ແລະ ພວກເຂົາບໍ່ກ້າຈັບນີໄຟ
ຍ້ອນວ່າພວກເຂົາມີຄວາມຢ້ານກົວ; ສະນັ້ນ
ເພິ່ນຈຶ່ງເລີ່ມກ່າວກັບພວກເຂົາອີກ ໂດຍທີ່
ເຫັນວ່າເພິ່ນໄດ້ຮັບຄວາມນິຍົມໃນສາຍຕາ
ຂອງຄົນບາງຄົນ ເຖິງຂະໜາດທີ່ຜູ້ຄົນທີ່
ເຫລືອຢູ່ນັ້ນເກີດມີຄວາມຢ້ານກົວຂຶ້ນມາ.
11 ສະນັ້ນ ເພິ່ນຈຶ່ງຖືກບັງຄັບໃຫ້ກ່າວ
ກັບພວກເຂົາຕື່ມອີກ ມີຄວາມວ່າ: ຈົ່ງເບິ່ງ,
ພີ່ນ້ອງຂອງຂ້າພະເຈົ້າ, ພວກທ່ານບໍ່ເຄີຍ
ອ່ານບໍວ່າ ພຣະເຈົ້າໄດ້ມອບອຳນາດໃຫ້
ແກ່ຊາຍຄົນໜຶ່ງ ແມ່ນແຕ່ໂມເຊໃຫ້ຕີນ້ຳ
ໃນ [ກ]ທະເລແດງ ແລະ ມັນກໍແຍກອອກໄປ
ທາງນັ້ນ ແລະ ທາງນີ້, ເຖິງຂະໜາດທີ່ຊາວ
ອິດສະຣາເອນຜູ້ເປັນບັນພະບຸລຸດຂອງ
ພວກເຮົາໄດ້ຜ່ານໄປເທິງແຜ່ນດິນແຫ້ງ,
ແລະ ນ້ຳໄດ້ໄຫລກັບ ແລະ ຖ້ວມກອງທັບ
ຂອງຊາວເອຢິບ ແລະ ໄດ້ກືນກິນພວກເຂົາ
ໃຫ້ໝົດສິ້ນໄປ?
12 ແລະ ບັດນີ້ຈົ່ງເບິ່ງ, ຖ້າຫາກພຣະເຈົ້າ
ໄດ້ມອບອຳນາດໃຫ້ຄົນຜູ້ນີ້ແລ້ວ ເຫດໃດ
ພວກທ່ານຈຶ່ງໂຕ້ຖຽງກັນອີກ, ແລະ ກ່າວ
ວ່າພຣະອົງບໍ່ໄດ້ມອບອຳນາດໃຫ້ແກ່ຂ້າ
ພະເຈົ້າ ຊຶ່ງໂດຍອຳນາດນັ້ນ ຂ້າພະເຈົ້າຈະ
ຮູ້ຈັກກ່ຽວກັບການຕັດສິນທີ່ຈະມາຫາພວກ
ທ່ານ ຖ້າຫາກພວກທ່ານບໍ່ກັບໃຈ?
13 ແຕ່ຈົ່ງເບິ່ງ, ບໍ່ພຽງແຕ່ພວກທ່ານປະ
ຕິເສດຄຳເວົ້າຂອງຂ້າພະເຈົ້າເທົ່ານັ້ນ ແຕ່
ພວກທ່ານຍັງໄດ້ປະຕິເສດຄຳເວົ້າທັງໝົດ
ຊຶ່ງບັນພະບຸລຸດຂອງພວກເຮົາໄດ້ເວົ້າໄວ້,
ແລະ ປະຕິເສດຄຳເວົ້າຂອງໂມເຊຄົນນີ້
ອີກ ຜູ້ທີ່ໄດ້ຮັບອຳນາດອັນຍິ່ງໃຫຍ່, ແທ້ຈິງ
ແລ້ວ, ພວກທ່ານໄດ້ປະຕິເສດຄຳເວົ້າ ຊຶ່ງ
ໂມເຊໄດ້ເວົ້າກ່ຽວກັບການສະເດັດມາຂອງ
ພຣະເມຊີອາ.
14 ແທ້ ຈິງ ແລ້ວ, ໂມເຊ ບໍ່ ໄດ້ ໃຫ້ ຖ້ອຍ
ຄຳໄວ້ບໍວ່າ ພຣະບຸດຂອງພຣະເຈົ້າຈະສະ
ເດັດມາ? ແລະ ເພິ່ນໄດ້ [ກ]ຍົກງູທອງຂຶ້ນໃນ
ຖິ່ນແຫ້ງແລ້ງກັນດານສັນໃດ, ຜູ້ທີ່ຈະສະ
ເດັດມາຈະຖືກຍົກຂຶ້ນສັນນັ້ນ.
15 ແລະ ຫລາຍຕໍ່ຫລາຍຄົນຜູ້ທີ່ຫລຽວ
ເບິ່ງງູນັ້ນຈະ [ກ]ມີຊີວິດສັນໃດ, ຫລາຍຕໍ່

8 *ກ* ຣລມ 7:29.
11 *ກ* ອພຍ 14:16; 1 ນຟ 17:26; ມຊຢ 7:19; ຄພ 8:2–3; ມຊ 1:25.
14 *ກ* ຈບຊ 21:6–9; 2 ນຟ 25:20; ແອວ 33:19–22. ຄມພ ພຣະເຢຊູຄຣິດ—ຮູບແບບ ຫລື ເຄື່ອງໝາຍເຖິງພຣະຄຣິດ.
15 *ກ* 1 ນຟ 17:41; ແອວ 37:45–47; 3 ນຟ 15:9.

ຫລາຍຄົນທີ່ຫລຽວເບິ່ງພຣະບຸດຂອງພຣະ
ຜູ້ເປັນເຈົ້າດ້ວຍສັດທາ, ໂດຍມີວິນຍານທີ່
ສຳນຶກຜິດຈະ [ຂ]ມີຊີວິດສັນນັ້ນ, ເຖິງແມ່ນ
ຈົນໄປສູ່ຊີວິດນິລັນດອນ.
16 ແລະ ບັດນີ້ຈົ່ງເບິ່ງ, ບໍ່ແມ່ນແຕ່ໂມເຊ
ຄົນ ດຽວ ເທົ່ານັ້ນ ທີ່ ໄດ້ ໃຫ້ ຖ້ອຍຄຳກ່ຽວ
ກັບເລື່ອງນີ້, ແຕ່ສາດສະດາຜູ້ບໍລິສຸດຄົນ
[ກ]ອື່ນໆກໍໄດ້ໃຫ້ຖ້ອຍຄຳໄວ້ຄືກັນ, ນັບຕັ້ງ
ແຕ່ວັນເວລາຂອງເພິ່ນຄືນໄປຫາວັນເວລາ
ຂອງອັບຣາຮາມ.
17 ແທ້ຈິງແລ້ວ, ແລະ ຈົ່ງເບິ່ງ, [ກ]ອັບຣາ
ຮາມໄດ້ເຫັນການສະເດັດມາຂອງພຣະອົງ,
ແລະ ກໍໄດ້ເຕັມໄປດ້ວຍຄວາມຍິນດີ ແລະ
ປິຕິຍິນດີຫລາຍ.
18 ແທ້ ຈິງ ແລ້ວ, ແລະ ຈົ່ງ ເບິ່ງ ຂ້າພະ
ເຈົ້າກ່າວກັບພວກທ່ານວ່າບໍ່ແມ່ນແຕ່ອັບ
ຣາຮາມເທົ່ານັ້ນທີ່ຮູ້ຈັກເລື່ອງເຫລົ່ານີ້ ແຕ່
ຍັງມີ [ກ]ອີກຫລາຍທ່ານຜູ້ມີຊີວິດກ່ອນວັນ
ເວລາຂອງອັບຣາຮາມຜູ້ທີ່ຖືກເອີ້ນໂດຍ
[ຂ]ລະບຽບຂອງພຣະເຈົ້າ; ແທ້ຈິງແລ້ວ, ຕາມ
ລະບຽບຂອງພຣະບຸດຂອງພຣະອົງ; ແລະ
ມັນເປັນໄປດັ່ງນີ້ ເພື່ອຈະໄດ້ສະແດງໃຫ້ຜູ້
ຄົນຮູ້ຈັກໄວ້ຫລາຍພັນປີກ່ອນການສະເດັດ
ມາຂອງພຣະອົງ, ວ່າການໄຖ່ກໍຈະມາເຖິງ
ພວກເຂົາ.
19 ແລະ ບັດນີ້ຂ້າພະເຈົ້າຢາກໃຫ້ພວກ
ທ່ານຮູ້ໄວ້ວ່າ ນັບຕັ້ງແຕ່ວັນເວລາຂອງອັບ
ຣາຮາມເປັນຕົ້ນມາ ມັນໄດ້ມີສາດສະດາ
ຫລາຍທ່ານທີ່ໄດ້ໃຫ້ຖ້ອຍຄຳເຖິງເລື່ອງ
ເຫລົ່ານີ້; ແທ້ຈິງແລ້ວ, ຈົ່ງເບິ່ງ, ສາດສະດາ
[ກ]ຊີນັດໄດ້ໃຫ້ຖ້ອຍຄຳຢ່າງກ້າຫານ; ຍ້ອນ
ການກະທຳນີ້ ເພິ່ນຈຶ່ງຖືກຂ້າຕາຍ.
20 ແລະ ຈົ່ງເບິ່ງ, [ກ]ຊີໂນກນຳອີກ. ແລະ
ອີໄຊອັດນຳອີກ, ແລະ [ຂ]ເອຊາຢານຳອີກ,
ແລະ [ຄ]ເຢເຣມີຢາ, (ເຢເຣມີຢາຄືສາດສະ
ດາຜູ້ທີ່ໃຫ້ຖ້ອຍຄຳເຖິງການທຳລາຍຂອງ
[ງ]ເຢຣູຊາເລັມ) ແລະ ບັດນີ້ພວກເຮົາຮູ້ຈັກ
ແລ້ວວ່າ ເຢຣູຊາເລັມໄດ້ຖືກທຳລາຍໄປ
ແລ້ວຕາມຄຳເວົ້າຂອງເຢເຣມີຢາ. ໂອ້ ເຫດ
ສັນໃດພຣະບຸດຂອງພຣະເຈົ້າຈະບໍ່ສະ
ເດັດມາຕາມຄຳທຳນາຍຂອງເພິ່ນ?
21 ແລະ ບັດນີ້ພວກທ່ານຍັງຈະໂຕ້ຖຽງ
ກັນຢູ່ບໍວ່າ [ກ]ເຢຣູຊາເລັມໄດ້ຖືກທຳລາຍ
ແລ້ວຫລືບໍ່? ພວກທ່ານຍັງຈະເວົ້າຢູ່ບໍວ່າ
[ຂ]ພວກລູກຊາຍຂອງເຊເດກີຢາບໍ່ໄດ້ຖືກຂ້າ
ຕາຍໝົດທຸກຄົນ ນອກຈາກ [ຄ]ມິວເລັກເທົ່າ
ນັ້ນ? ແທ້ຈິງແລ້ວ, ແລະ ພວກທ່ານບໍ່ເຫັນ
ບໍວ່າ ລູກຫລານຂອງເຊເດກີຢາຢູ່ນຳພວກ
ເຮົາ, ແລະ ພວກເຂົາໄດ້ຖືກຂັບໄລ່ອອກມາ
ຈາກແຜ່ນດິນເຢຣູຊາເລັມ? ແຕ່ຈົ່ງເບິ່ງ, ນີ້
ຍັງບໍ່ໝົດ—
22 ລີໄຮບັນພະບຸລຸດຂອງພວກເຮົາກໍ
ໄດ້ຖືກໄລ່ອອກມາຈາກເຢຣູຊາເລັມ ຍ້ອນ
ວ່າເພິ່ນໄດ້ໃຫ້ຖ້ອຍຄຳກ່ຽວກັບສິ່ງເຫລົ່າ
ນີ້, ແລະ ນີໄຟກໍໄດ້ໃຫ້ຖ້ອຍຄຳກ່ຽວກັບ
ສິ່ງເຫລົ່ານີ້ຄືກັນ, ແລະ ບັນພະບຸລຸດຂອງ
ພວກເຮົາເກືອບທັງໝົດນຳອີກຈົນລົງມາ
ເຖິງເວລານີ້; ແທ້ຈິງແລ້ວ, ພວກເພິ່ນໄດ້

15 *ຂ* ຢຮ 11:25.
16 *ກ* ຢຄ 4:4–5; 7:11.
17 *ກ* ປຖກ 22:8–14;
ຢຮ 8:56.
18 *ກ* ແອວ 13:19;
ຄພ 84:6–16; 136:37.
*ຂ* ຄມພ ຖານະປະໂລຫິດ
ແຫ່ງເມນຄີເສເດັກ.
19 *ກ* ແອວ 34:7.
20 *ກ* 1 ນຟ 19:10;
3 ນຟ 10:15–16.
ຄມພ ພຣະຄຳພີ—ພຣະ
ຄຳພີທີ່ສູນເສຍໄປ.
*ຂ* ອຊຢ 53.
*ຄ* 1 ນຟ 5:13; 7:14.
*ງ* ຢມຢ 26:18;
1 ນຟ 1:4.
21 *ກ* 2 ນຟ 6:8;
ອມນ 1:15.
*ຂ* 2 ກສ 25:7;
ຢມຢ 39:6; 52:10.
*ຄ* ອຊກ 17:22–23;
ຮລມ 6:10.

ໃຫ້ ຖ້ອຍ ຄຳ ເຖິງ [ກ]ການ ສະ ເດັດ ມາ ຂອງ
ພຣະຄຣິດ, ແລະ ໄດ້ລໍຖ້າ, ແລະ ປິຕິຍິນດີ
ໃນວັນເວລາຂອງພຣະອົງ ຊຶ່ງກຳລັງຈະມາ
ເຖິງ.

23 ແລະ ຈົ່ງເບິ່ງ, ພຣະອົງຄືພຣະເຈົ້າ,
ແລະ ພຣະອົງສະຖິດຢູ່ນຳພວກເພິ່ນ, ແລະ
ພຣະອົງໄດ້ສະແດງພຣະອົງເອງໃຫ້ປະຈັກ
ແກ່ພວກເພິ່ນ, ວ່າພວກເພິ່ນຖືກໄຖ່ໂດຍ
ພຣະອົງ; ແລະ ພວກເພິ່ນໄດ້ສັນລະເສີນ
ພຣະອົງເພາະສິ່ງທີ່ຈະມາເຖິງນັ້ນ.

24 ແລະ ບັດນີ້, ໂດຍ ທີ່ເຫັນວ່າພວກ
ທ່ານຮູ້ຈັກເລື່ອງເຫລົ່ານີ້ແລ້ວ ແລະ ຈະປະ
ຕິເສດມັນບໍ່ໄດ້ນອກຈາກວ່າພວກທ່ານຈະ
ເວົ້າຕົວະເທົ່ານັ້ນ, ສະນັ້ນ ຖ້າຫາກພວກ
ທ່ານເວົ້າຕົວະພວກທ່ານກໍຈະເປັນຜູ້ເຮັດ
ບາບ ຍ້ອນວ່າພວກທ່ານປະຕິເສດເລື່ອງ
ທັງໝົດນີ້ ທັງໆທີ່ມີຫລັກຖານຢູ່ຢ່າງພຽງພໍ
ຊຶ່ງພວກທ່ານໄດ້ເຫັນມາ; ແທ້ຈິງແລ້ວ,
ພວກທ່ານໄດ້ເຫັນ [ກ]ທຸກສິ່ງທຸກຢ່າງ, ທັງສິ່ງ
ຢູ່ໃນສະຫວັນ, ແລະ ທັງທຸກສິ່ງທຸກຢ່າງຢູ່
ໃນໂລກກໍໄດ້ເປັນພະຍານວ່າ ສິ່ງເຫລົ່ານີ້
ເປັນຄວາມຈິງ.

25 ແຕ່ຈົ່ງເບິ່ງ, ພວກທ່ານໄດ້ປະຕິເສດ
ຄວາມຈິງ ແລະ [ກ]ກະບົດຕໍ່ພຣະເຈົ້າຜູ້ບໍ
ລິສຸດຂອງພວກທ່ານ ແລະ ໃນເວລານີ້
ແທນທີ່ພວກທ່ານຈະ [ຂ]ສະສົມຊັບສົມບັດ
ໄວ້ໃນສະຫວັນເພື່ອຕົນເອງ ຊຶ່ງບ່ອນນັ້ນ
ບໍ່ມີສິ່ງໃດທີ່ຈະເນົ່າເປື່ອຍໄດ້, ແລະ ຢູ່
ບ່ອນນັ້ນບໍ່ມີສິ່ງໃດທີ່ບໍ່ສະອາດຈະເຂົ້າໄປ
ໄດ້, ແຕ່ພວກທ່ານກຳລັງກອບໂກຍເອົາ
ພຣະພິໂລດໄວ້ເພື່ອຕົນເອງໃນວັນແຫ່ງ
[ຄ]ການພິພາກສາ.

26 ແທ້ຈິງແລ້ວ, ໃນເວລານີ້ ພວກທ່ານ
ກຳລັງສຸກ ເພາະຄວາມພິນາດອັນເປັນນິດ
ສຳລັບການຄາດຕະກຳຂອງພວກທ່ານ
ແລະ [ກ]ການລ່ວງປະເວນີ ແລະ ການຊົ່ວ
ຮ້າຍຂອງພວກທ່ານ; ແທ້ຈິງແລ້ວ, ແລະ
ຖ້າຫາກພວກທ່ານບໍ່ກັບໃຈ ມັນຈະມາເຖິງ
ພວກທ່ານໃນບໍ່ຊ້ານີ້.

27 ແທ້ຈິງແລ້ວ, ຈົ່ງເບິ່ງບັດນີ້ ມັນຢູ່ໃກ້ໆ
ປະຕູຂອງທ່ານ; ແທ້ຈິງແລ້ວ, ໃຫ້ພວກ
ທ່ານໄປຫາບັນລັງຕັດສິນ ແລະ ຄົ້ນເບິ່ງ;
ແລະ ຈົ່ງເບິ່ງ, ຜູ້ຕັດສິນຂອງພວກທ່ານ
ໄດ້ຖືກລອບຂ້າ ແລະ ເພິ່ນກຳລັງ [ກ]ນອນ
ຈົມກອງເລືອດຂອງເພິ່ນຢູ່; ແລະ ເພິ່ນຖືກ
ລອບຂ້າ [ຂ]ໂດຍນ້ອງຊາຍຂອງເພິ່ນ, ຜູ້ຊຶ່ງ
ຢາກນັ່ງບັນລັງຕັດສິນແທນ.

28 ແລະ ຈົ່ງເບິ່ງ, ທັງສອງເປັນຄົນຂອງ
ພັກລັບຂອງພວກທ່ານນັ້ນເອງ, ຊຶ່ງຜູ້ [ກ]ຕັ້ງ
ມັນຄືແກດີອານທັນ ແລະ ມານຮ້າຍຜູ້ພະ
ຍາຍາມທີ່ຈະທຳລາຍຈິດວິນຍານຂອງ
ມະນຸດ.

## ບົດທີ 9

*ພວກ ໄປເອົາຂ່າວພົບຫົວໜ້າຜູ້ຕັດສິນ
ຕາຍຄາບັນລັງຕັດສິນ—ຜູ້ໄປເອົາຂ່າວຖືກ
ຈັບເຂົ້າຄຸກ ແລະ ພາຍລຸນມາຖືກປ່ອຍຕົວ
ໄປ—ໂດຍການດົນໃຈ ນີໄຟຮູ້ຈັກວ່າ ຊີ
ອານທຳເປັນຄາດຕະກອນ—ຫລາຍຄົນ
ຮັບຮູ້ວ່ານີໄຟເປັນສາດສະດາ. ປະມານ
23–21 ປີກ່ອນ ຄ.ສ.*

22 ກ ຄນພ ພຣະເຢຊູຄຣິດ—ການທຳນາຍກ່ຽວກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ.
24 ກ ແອວ 30:44; ມຊ 6:63.
25 ກ ມຊຢ 2:36–38; 3:12.
ຂ ຮລມ 5:8; 3 ນຟ 13:19–21.
ຄ ຄພ 10:20–23; 121:23–25.
26 ກ ຄນພ ການລ່ວງປະເວນີ.
27 ກ ຮລມ 9:3, 15.
ຂ ຮລມ 9:6, 26–38.
28 ກ ຮລມ 6:26–30.

1 ຈົ່ງ ເບິ່ງ, ບັດ ນີ້ ເຫດ ການ ໄດ້ ບັງ ເກີດ
ຂຶ້ນຄື ເວລານີໄຟເວົ້າຂໍ້ຄວາມນີ້ແລ້ວ ໄດ້ມີ
ບາງຄົນ ຊຶ່ງຢູ່ໃນບັນດາພວກເຂົາແລ່ນໄປ
ຫາບັນລັງຕັດສິນ; ແທ້ຈິງແລ້ວ, ມັນມີນຳ
ກັນຫ້າຄົນທີ່ໄປ, ແລະ ພວກເຂົາໄດ້ລົມກັນ
ຕອນແລ່ນໄປນັ້ນວ່າ:
2 ຈົ່ງເບິ່ງ, ບັດນີ້ພວກເຮົາຈະຮູ້ຈັກຢ່າງ
ແນ່ນອນວ່າ ຄົນຜູ້ນັ້ນເປັນສາດສະດາແທ້
ຫລືບໍ່ ແລະ ພຣະເຈົ້າບັນຊາໃຫ້ເພິ່ນທຳ
ນາຍເລື່ອງໜ້າອັດສະຈັນເຊັ່ນນີ້ແກ່ພວກ
ເຂົາ. ຈົ່ງເບິ່ງ, ພວກເຮົາບໍ່ເຊື່ອວ່າພຣະອົງ
ຈະກະທຳແບບນີ້; ແທ້ຈິງແລ້ວ, ພວກເຮົາບໍ່
ເຊື່ອວ່າເພິ່ນເປັນສາດສະດາ; ເຖິງຢ່າງໃດ
ກໍຕາມ, ຖ້າຫາກສິ່ງທີ່ເພິ່ນເວົ້າກ່ຽວກັບຫົວ
ໜ້າຜູ້ຕັດສິນວ່າ ເພິ່ນຖືກຂ້າຕາຍນັ້ນເປັນ
ຄວາມຈິງ ແລ້ວພວກເຮົາຈຶ່ງຈະເຊື່ອວ່າ ສິ່ງ
ທີ່ເພິ່ນເວົ້າມານັ້ນເປັນຄວາມຈິງ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ແລ່ນໄປຢ່າງວ່ອງໄວເທົ່າທີ່ຈະ
ໄວໄດ້, ແລະ ເຂົ້າໄປຮອດບັນລັງຕັດສິນ;
ແລະ ຈົ່ງເບິ່ງ, ຫົວໜ້າຜູ້ຕັດສິນລົ້ມຢູ່ກັບ
ພື້ນ ແລະ [ກ]ນອນຈົມກອງເລືອດຢູ່.
4 ແລະ ບັດນີ້ຈົ່ງເບິ່ງ, ເວລາພວກເຂົາ
ເຫັນເຊັ່ນນີ້ ພວກເຂົາກໍແປກປະຫລາດໃຈ
ຢ່າງຍິ່ງ, ເຖິງຂະໜາດທີ່ພວກເຂົາໄດ້ລົ້ມ
ລົງຢູ່ກັບພື້ນດິນ; ເພາະວ່າພວກເຂົາບໍ່ເຊື່ອ
ວ່າຄຳເວົ້າທີ່ນີໄຟເວົ້າກ່ຽວກັບຫົວໜ້າຜູ້ຕັດ
ສິນນັ້ນຈິງ.
5 ແຕ່ບັດນີ້, ເມື່ອເຫັນແລ້ວພວກເຂົາກໍ
ເຊື່ອ, ແລະ ພວກເຂົາຢ້ານວ່າການພິພາກ
ສາທັງໝົດທີ່ນີໄຟເວົ້າມານັ້ນຈະເກີດກັບຜູ້
ຄົນ; ສະນັ້ນ ພວກເຂົາຈຶ່ງຕົວສັ່ນ ແລະ ລົ້ມ
ລົງຢູ່ກັບພື້ນດິນ.
6 ບັດນີ້, ໃນທັນທີທີ່ຜູ້ຕັດສິນຖືກລອບຂ້າ
ຕາຍ—ໂດຍນ້ອງຊາຍຂອງຕົນ ຊຶ່ງໄດ້ນຸ່ງ
ເຄື່ອງລຶກລັບເຂົ້າມາແທງ ແລ້ວກໍແລ່ນໜີ
ໄປ, ແລະ ພວກຂ້າໃຊ້ໄດ້ແລ່ນໄປບອກຜູ້
ຄົນ, ສົ່ງສຽງຮ້ອງປ່າວເຖິງເລື່ອງການຄາດ
ຕະກຳທີ່ເກີດຂຶ້ນໃນບັນດາພວກເຂົາ;
7 ແລະ ຈົ່ງເບິ່ງ ຜູ້ຄົນໄດ້ມາເຕົ້າໂຮມກັນ
ທີ່ບັນລັງຕັດສິນ—ແລະ ຈົ່ງເບິ່ງ, ພວກເຂົາ
ມີຄວາມແປກປະຫລາດໃຈຫລາຍ ເວລາ
ພວກເຂົາເຫັນຄົນຫ້າຄົນນັ້ນລົ້ມຢູ່ກັບພື້ນ
ດິນ.
8 ແລະ ບັດ ນີ້ ຈົ່ງ ເບິ່ງ, ຜູ້ ຄົນ ບໍ່ ຮູ້ ຫຍັງ
ກ່ຽວກັບຝູງຊົນທີ່ມາເຕົ້າໂຮມກັນທີ່ [ກ]ສວນ
ຂອງນີໄຟນັ້ນ; ສະນັ້ນ ພວກເຂົາຈຶ່ງເວົ້າ
ກັນວ່າ: ຄົນພວກນີ້ຄືພວກທີ່ລອບຂ້າຜູ້ຕັດ
ສິນ ແລະ ພຣະເຈົ້າລົງໂທດພວກເຂົາ ເພື່ອ
ພວກເຂົາຈະໜີໄປຈາກພວກເຮົາບໍ່ໄດ້.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນ
ໄດ້ຈັບພວກເຂົາ, ແລະ ມັດພວກເຂົາ ແລະ
ເອົາພວກເຂົາເຂົ້າຄຸກ. ແລະ ມີຂ່າວສານ
ສົ່ງອອກໄປທົ່ວວ່າ ຜູ້ຕັດສິນຖືກລອບຂ້າ
ແລະ ຄາດຕະກອນກໍໄດ້ຖືກຈັບເອົາເຂົ້າ
ຄຸກແລ້ວ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ມື້ຕໍ່ມາ ຜູ້ຄົນກໍໄດ້ມາເຕົ້າໂຮມກັນເພື່ອໄວ້
ທຸກ ແລະ ເພື່ອ [ກ]ຖືສິນອົດເຂົ້າໃນພິທີຝັງ
ສົບຫົວໜ້າຜູ້ຕັດສິນຜູ້ຍິ່ງໃຫຍ່ ຊຶ່ງຖືກຂ້າ
ຕາຍ.
11 ແລະ ພວກຜູ້ຕັດສິນຜູ້ທີ່ໄປຟັງຄຳ
ເວົ້າຂອງນີໄຟຢູ່ໃນສວນຂອງເພິ່ນນັ້ນ ກໍ
ໄດ້ມາເຕົ້າໂຮມກັນໃນພິທີຝັງສົບຄືກັນ.
12 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ສອບຖາມໃນບັນດາຜູ້ຄົນ,
ມີຄວາມວ່າ: ຄົນຫ້າຄົນທີ່ຖືກສົ່ງມາເພື່ອ
ສອບສວນກ່ຽວກັບຫົວໜ້າຜູ້ຕັດສິນວ່າ

**9** 3*ກ* ຮລມ 8:27.
8*ກ* ຮລມ 7:10.
10*ກ* ຄນພ ຖືສິນອົດເຂົ້າ,
ການຖືສິນອົດເຂົ້າ.

ເພິ່ນຖືກຂ້າຕາຍຫລືບໍ່ນັ້ນຢູ່ໃສ? ແລະ ຄົນ
ທັງຫລາຍຕອບ ແລະ ເວົ້າວ່າ: ກ່ຽວກັບຄົນ
ຫ້າຄົນທີ່ພວກທ່ານສົ່ງມານັ້ນພວກເຮົາບໍ່
ຮູ້ຈັກ, ແຕ່ວ່າມີຫ້າຄົນທີ່ເປັນຄາດຕະກອນ
ຊຶ່ງພວກເຮົາໄດ້ຈັບເຂົ້າຄຸກແລ້ວ.
13 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກຜູ້ຕັດສິນຈຶ່ງສັ່ງໃຫ້ນຳເອົາພວກຫ້າ
ຄົນນັ້ນມາ ແລະ ພວກເຂົາຖືກນຳມາ, ແລະ
ຈົ່ງເບິ່ງ ພວກເຂົາຄືຄົນຫ້າຄົນທີ່ຖືກສົ່ງໄປ
ນັ້ນ; ແລະ ຈົ່ງເບິ່ງ ພວກຜູ້ຕັດສິນໄດ້ສອບ
ຖາມພວກເຂົາ ເພື່ອຈະໄດ້ຮູ້ຈັກກ່ຽວກັບ
ເລື່ອງຕ່າງໆ, ແລະ ພວກເຂົາໄດ້ບອກຜູ້ຄົນ
ເຫລົ່ານັ້ນເຖິງເລື່ອງທັງໝົດທີ່ພວກເຂົາໄດ້
ເຮັດ, ມີຄວາມວ່າ:
14 ພວກ ເຮົາໄດ້ແລ່ນມາຫາບັນລັງຕັດ
ສິນ ແລະ ເມື່ອພວກເຮົາເຫັນທຸກສິ່ງທຸກ
ຢ່າງ ຄື ກັນ ກັບ ນີ ໄຟ ໄດ້ ໃຫ້ຖ້ອຍຄຳ ໄວ້,
ພວກເຮົາກໍແປກປະຫລາດໃຈຫລາຍ ເຖິງ
ຂະໜາດທີ່ພວກເຮົາໄດ້ລົ້ມລົງຢູ່ກັບພື້ນ
ດິນ; ແລະ ເວລາພວກເຮົາຫາຍແປກປະ
ຫລາດໃຈແລ້ວ, ຈົ່ງເບິ່ງ ພວກເຂົາກໍໄດ້
ເອົາພວກເຮົາເຂົ້າຄຸກ.
15 ບັດນີ້, ເລື່ອງການລອບຂ້າຜູ້ຕັດສິນນີ້
ພວກເຮົາບໍ່ຮູ້ຈັກວ່າຜູ້ໃດເຮັດ, ແລະ ພວກ
ເຮົາຮູ້ຈັກພຽງແຕ່ວ່າ ພວກເຮົາໄດ້ແລ່ນ
ມາຕາມທີ່ພວກທ່ານປາດຖະໜາ ແລະ
ຈົ່ງເບິ່ງ, ເພິ່ນຕາຍແລ້ວຕາມຄຳເວົ້າຂອງ
ນີໄຟ.
16 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ພວກຜູ້ຕັດສິນໄດ້ຊີ້ແຈງເລື່ອງນີ້ແກ່ຜູ້ຄົນ
ແລະ ໄດ້ຮ້ອງກ່າວໂທດນີໄຟ, ມີຄວາມວ່າ:
ຈົ່ງເບິ່ງ, ພວກເຮົາຮູ້ຈັກວ່າ ນີໄຟຜູ້ນີ້ຕ້ອງ
ຕົກລົງກັບຜູ້ໃດຜູ້ໜຶ່ງໃຫ້ຂ້າຜູ້ຕັດສິນ, ແລະ
ລາວຈຶ່ງໄດ້ປະກາດເລື່ອງນີ້ແກ່ພວກເຮົາ,
ເພື່ອລາວຈະໄດ້ເຮັດໃຫ້ພວກເຮົາປ່ຽນໃຈ
ເຫລື້ອມໃສຕາມສັດທາຂອງລາວ, ເພື່ອ
ລາວຈະໄດ້ຍົກຕົວເອງຂຶ້ນເປັນຜູ້ຍິ່ງໃຫຍ່,
ເປັນຜູ້ທີ່ພຣະເຈົ້າໄດ້ເລືອກໄວ້ ແລະ ເປັນ
ສາດສະດາ.
17 ແລະ ບັດນີ້ ຈົ່ງ ເບິ່ງ, ພວກ ເຮົາ ຈະ
ສອບສວນຊາຍຜູ້ນີ້ ແລະ ລາວຈະສາລະ
ພາບຄວາມຜິດຂອງລາວ ແລະ ພວກເຮົາ
ຈະໄດ້ຮູ້ຈັກວ່າຜູ້ໃດແທ້ຂ້າຜູ້ຕັດສິນ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫ້າ
ຄົນຖືກປ່ອຍຕົວໃນມື້ຟັງສົບນັ້ນ. ເຖິງຢ່າງ
ໃດກໍຕາມ, ພວກເຂົາຍັງໄດ້ຕິຕຽນພວກຜູ້
ຕັດສິນກ່ຽວກັບຄຳເວົ້າທີ່ເວົ້າປັກປຳນີໄຟ,
ແລະ ໄດ້ໂຕ້ຖຽງກັບຜູ້ຕັດສິນແຕ່ລະຄົນ,
ເຖິງຂະໜາດທີ່ພວກເຂົາຍອມຈຳນົນ.
19 ເຖິງຢ່າງໃດກໍຕາມ, ພວກເຂົາຍັງໄດ້
ສັ່ງໃຫ້ຈັບມັດເອົານີໄຟມາ ແລະ ໃຫ້ມາຢືນ
ຢູ່ຕໍ່ໜ້າຝູງຊົນ, ແລະ ພວກເຂົາໄດ້ສອບ
ຖາມເພິ່ນຫລາຍຢ່າງ ເພື່ອຈະເຮັດໃຫ້ເພິ່ນ
ສັບສົນ, ເພື່ອວ່າພວກເຂົາຈະໄດ້ກ່າວຫາ
ເພິ່ນໃຫ້ເຖິງຄວາມຕາຍ—
20 ໂດຍກ່າວກັບເພິ່ນວ່າ: ທ່ານເປັນຜູ້
ສົມຮູ້ຮ່ວມຄິດ; ແມ່ນໃຜເປັນຜູ້ເຮັດຄາດ
ຕະກຳນີ້? ບັດນີ້ຈົ່ງບອກມາ ແລະ ຍອມ
ຮັບຄວາມຜິດຂອງທ່ານສາ; ກ່າວວ່າ, ຈົ່ງ
ເບິ່ງ ນີ້ແມ່ນເງິນ; ແລະ ພວກເຮົາຈະໄວ້ຊີ
ວິດຂອງທ່ານ ຖ້າຫາກທ່ານບອກພວກເຮົາ
ເຖິງການຕົກລົງຮ່ວມມືກັບຄາດຕະກອນ
ຄົນນັ້ນ.
21 ແຕ່ ນີໄຟ ໄດ້ ກ່າວ ກັບ ພວກ ເຂົາ ວ່າ:
ໂອ້ ພວກ [ກ]ຄົນໂງ່ເອີຍ, ພວກທ່ານມີໃຈ
ສົກກະປົກ, ພວກທ່ານຕາບອດ, ພວກທ່ານ
ເປັນຄົນ [ຂ]ແຂງຄໍ, ພວກທ່ານຮູ້ບໍ່ວ່າ ພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກທ່ານ

21 *ກ* ກຈກ 7:51.

*ຂ* ຄນພ ກະບົດ, ການກະບົດ.

ຈະ ປ່ອຍ ໃຫ້ ພວກ ທ່ານ ໄປ ໃນ ທາງ ບາບ
ຂອງພວກທ່ານອີກດົນປານໃດ?
22 ໂອ້ ພວກ ທ່ານ ຄວນ ເລີ່ມ ຕົ້ນ ຄວນ
ຄາງ ແລະ [ກ]ເປັນທຸກ, ຍ້ອນວ່າໃນຂະນະນີ້
ຄວາມພິນາດອັນໃຫຍ່ຫລວງກໍາລັງຄອຍ
ຖ້າພວກທ່ານຢູ່, ຖ້າຫາກພວກທ່ານບໍ່ກັບ
ໃຈ.
23 ຈົ່ງ ເບິ່ງ ພວກ ທ່ານ ກ່າວ ວ່າ ຂ້າ ພະ
ເຈົ້າໄດ້ຕົກລົງກັບຜູ້ໃດຜູ້ໜຶ່ງໃຫ້ລອບຂ້າ
ສີ ໂຊຣໍາຜູ້ຊຶ່ງເປັນຫົວໜ້າຜູ້ຕັດສິນຂອງ
ພວກ ເຮົາ. ແຕ່ ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ ກ່າວ
ກັບ ພວກທ່ານ ວ່າ ເປັນຍ້ອນຂ້າພະ ເຈົ້າ
ໄດ້ສະແດງຫລັກຖານແກ່ພວກທ່ານ ເພື່ອ
ພວກທ່ານຈະໄດ້ຮູ້ຈັກກ່ຽວກັບເລື່ອງນີ້;
ແທ້ ຈິງ ແລ້ວ, ເພື່ອ ເປັນ ພະຍານ ຕໍ່ ພວກ
ທ່ານວ່າ ຂ້າພະເຈົ້າຮູ້ຈັກຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຊຶ່ງມີຢູ່ໃນບັນດາ
ພວກທ່ານ.
24 ແລະ ຍ້ອນ ວ່າ ຂ້າ ພະ ເຈົ້າ ໄດ້ ເຮັດ
ສິ່ງນີ້ ພວກທ່ານຈຶ່ງເວົ້າວ່າ ຂ້າພະເຈົ້າໄດ້
ຕົກ ລົງ ກັບ ຜູ້ ໃດ ຜູ້ ໜຶ່ງ ໃຫ້ ເຮັດ ສິ່ງ ນີ້; ແທ້
ຈິງແລ້ວ, ຍ້ອນວ່າຂ້າພະເຈົ້າໄດ້ສະແດງ
ເຄື່ອງໝາຍນີ້ແກ່ພວກທ່ານ, ພວກທ່ານຈຶ່ງ
ຄຽດແຄ້ນໃຫ້ຂ້າພະເຈົ້າ, ແລະ ພະຍາຍາມ
ທີ່ຈະທໍາລາຍຊີວິດຂອງຂ້າພະເຈົ້າ.
25 ແລະ ບັດ ນີ້ ຈົ່ງ ເບິ່ງ, ຂ້າພະເຈົ້າຈະ
ສະແດງເຄື່ອງໝາຍອີກຢ່າງໜຶ່ງແກ່ພວກ
ທ່ານ, ແລະ ຈະເບິ່ງວ່າ ພວກທ່ານຈະພະ
ຍາຍາມທໍາລາຍຊີວິດຂອງຂ້າພະເຈົ້າໃນ
ເລື່ອງນີ້ຫລືບໍ່.
26 ຈົ່ງ ເບິ່ງ ຂ້າ ພະ ເຈົ້າ ກ່າວ ກັບ ພວກ
ທ່ານວ່າ: ໃຫ້ໄປຫາເຮືອນຂອງຊີອານທໍາຜູ້
ເປັນ [ກ]ນ້ອງຊາຍຂອງສີ ໂຊຣໍາ, ແລະ ເວົ້າ
ກັບລາວວ່າ—
27 ນີໄຟ ຜູ້ ທີ່ ອ້າງ ຕົນ ເອງ ວ່າ ເປັນ ສາດ
ສະ ດາ ຜູ້ ໄດ້ ທໍານາຍ ກ່ຽວກັບ ຄວາມ ຊົ່ວ
ຢ່າງຫລວງຫລາຍ ຂອງຜູ້ຄົນ ພວກນີ້ໄດ້
ສົມຮູ້ຮ່ວມຄິດກັບເຈົ້າບໍ ໃນການລອບຂ້າສີ
ໂຊຣໍາຜູ້ເປັນອ້າຍຂອງເຈົ້າ?
28 ແລະ ຈົ່ງ ເບິ່ງ, ລາວຈະເວົ້າກັບພວກ
ທ່ານວ່າ, ບໍ່.
29 ແລະ ພວກທ່ານຈົ່ງຖາມລາວອີກວ່າ:
ເຈົ້າໄດ້ຂ້າອ້າຍຂອງເຈົ້າບໍ່?
30 ແລະ ລາວ ຈະ ຢືນ ຂຶ້ນ ດ້ວຍ ຄວາມ
ຢ້ານ ກົວ ແລະ ບໍ່ຮູ້ວ່າຈະ ເວົ້າແນວໃດ.
ແລະ ຈົ່ງ ເບິ່ງ, ລາວ ຈະ ປະ ຕິ ເສດ ແລະ
ລາວຈະເຮັດທໍາທ່າວ່າລາວແປກໃຈ; ເຖິງ
ຢ່າງໃດກໍຕາມ, ລາວກໍຈະອ້າງກັບພວກ
ທ່ານວ່າ ລາວບໍລິສຸດ.
31 ແຕ່ ຈົ່ງ ເບິ່ງ, ໃຫ້ພວກທ່ານກວດຄົ້ນ
ຕົວ ລາວ, ແລະ ພວກ ທ່ານ ຈະ ໄດ້ ເຫັນ
ເລືອດໃນສາຍເສື້ອຄຸມຂອງລາວ.
32 ແລະ ເວລາພວກທ່ານເຫັນສິ່ງເຫລົ່າ
ນີ້ແລ້ວ, ພວກທ່ານຈົ່ງຖາມວ່າ: ເລືອດນີ້ມາ
ແຕ່ໃສ? ພວກເຮົາບໍ່ຮູ້ບໍວ່າມັນເປັນເລືອດ
ຂອງອ້າຍເຈົ້າ?
33 ແລະ ເວລານັ້ນລາວຈະຕົວສັ່ນ, ແລະ
ໜ້າຊີດ, ຄ້າຍຄືກັບວ່າ ຄວາມຕາຍມາຮອດ
ລາວແລ້ວ.
34 ແລະ ເວລານັ້ນພວກທ່ານຈະເວົ້າວ່າ:
ຍ້ອນຄວາມຢ້ານ ແລະ ໜ້າຊີດທີ່ມີຢູ່ໃນໃບ
ໜ້າຂອງເຈົ້າ, ຈົ່ງເບິ່ງ, ພວກເຮົາຈຶ່ງຮູ້ວ່າ
ເຈົ້າມີຄວາມຜິດ.
35 ແລະ ເວລາ ນັ້ນ ລາວ ຈະ ມີ ຄວາມ
ຢ້ານກົວຫລາຍທີ່ສຸດ; ແລະ ແລ້ວລາວຈະ
ສາລະພາບກັບພວກທ່ານ, ແລະ ລາວຈະ
ປະຕິເສດບໍ່ໄດ້ອີກວ່າ ລາວບໍ່ໄດ້ເຮັດການ
ຄາດຕະກໍານີ້.

22 *ກ* ມຊຢ 7:24.
26 *ກ* ຮລມ 8:27.

36 ແລະ ເວລາ ນັ້ນ ລາວ ຈະ ກ່າວ ກັບ
ພວກ ທ່ານ ວ່າ ຂ້າ ພະ ເຈົ້າ ນີໄຟ ບໍ່ ຮູ້ ຈັກ
ເລື່ອງນີ້ເລີຍ ນອກຈາກວ່າ ຂ້າພະເຈົ້າຈະ
ໄດ້ ຮັບ ມາ ໂດຍ ອຳນາດ ຂອງ ພຣະ ເຈົ້າ.
ແລະ ເວລານັ້ນ ພວກທ່ານຈະຮູ້ວ່າ ຂ້າພະ
ເຈົ້າເປັນຄົນຊື່ສັດ, ແລະ ພຣະເຈົ້າໄດ້ສົ່ງ
ຂ້າພະເຈົ້າມາຫາພວກທ່ານ.
37 ແລະ ເຫດ ການ ໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ໄປ ແລະ ເຮັດ, ຕາມທີ່ນີໄຟ
ໄດ້ກ່າວກັບພວກເຂົາ. ແລະ ຈົ່ງເບິ່ງ, ຄຳ
ເວົ້າຂອງ ເພິ່ນລ້ວນແລ້ວແຕ່ເປັນຄວາມ
ຈິງ; ເພາະອີງຕາມຄຳທີ່ລາວໄດ້ປະຕິເສດ,
ແລະ ອີງຕາມຄຳທີ່ລາວໄດ້ສາລະພາບນຳ
ອີກ.
38 ແລະ ລາວຖືກນຳຕົວມາເພື່ອພິສູດ
ວ່າລາວເອງເປັນຄາດຕະກອນ, ເຖິງຂະ
ໜາດທີ່ຄົນຫ້າຄົນໄດ້ຖືກປ່ອຍຕົວໄປ ແລະ
ນີໄຟກໍຖືກປ່ອຍຕົວໄປຄືກັນ.
39 ແລະ ຊາວນີໄຟບາງຄົນໄດ້ເຊື່ອໃນ
ຄຳເວົ້າຂອງນີໄຟ; ແລະ ບາງຄົນໄດ້ເຊື່ອ
ໃນເລື່ອງນີ້ເພາະປະຈັກພະຍານ ຂອງ
ຫ້າຄົນນັ້ນ, ເພາະພວກເຂົາໄດ້ປ່ຽນໃຈ
ເຫລື້ອມໃສໃນຂະນະທີ່ພວກເຂົາຢູ່ໃນຄຸກ.
40 ແລະ ບັດນີ້ມີບາງຄົນໃນບັນດາຜູ້ຄົນ
ເວົ້າວ່ານີໄຟເປັນສາດສະດາ.
41 ແລະ ມີຄົນອື່ນໆທີ່ເວົ້າວ່າ: ຈົ່ງເບິ່ງ
ເພິ່ນເປັນພຣະເຈົ້າ, ເພາະຖ້າຫາກເພິ່ນບໍ່
ໄດ້ເປັນພຣະເຈົ້າແລ້ວ ເພິ່ນຈະຮູ້ຈັກທຸກສິ່ງ
ທຸກຢ່າງບໍ່ໄດ້. ເພາະຈົ່ງເບິ່ງ, ເພິ່ນໄດ້ບອກ
ພວກເຮົາເຖິງຄວາມນຶກຄິດທີ່ຢູ່ໃນໃຈຂອງ
ພວກເຮົາ, ແລະ ບອກເຖິງເລື່ອງຕ່າງໆນຳ
ອີກ; ແລະ ແມ່ນແຕ່ເພິ່ນໄດ້ເຮັດໃຫ້ພວກ
ເຮົາຮູ້ຈັກຄາດຕະກອນຕົວຈິງຂອງຫົວໜ້າ
ຜູ້ຕັດສິນຂອງພວກເຮົາ.

## ບົດທີ 10

*ພຣະຜູ້ເປັນເຈົ້າປະທານອຳນາດແຫ່ງການຜະນຶກໃຫ້ແກ່ນີໄຟ—ເພິ່ນມີອຳນາດທີ່ຈະມັດ ແລະ ແກ້ຢູ່ໃນແຜ່ນດິນໂລກ ແລະ ຢູ່ໃນສະຫວັນ—ເພິ່ນສັ່ງໃຫ້ຜູ້ຄົນກັບໃຈ ຖ້າບໍ່ດັ່ງນັ້ນພວກເຂົາຈະຕາຍ—ພຣະວິນຍານນຳພາເພິ່ນຈາກຝູງຊົນກຸ່ມໜຶ່ງໄປຫາຝູງຊົນອີກກຸ່ມໜຶ່ງ. ປະມານ 21–20 ປີກ່ອນ ຄ.ສ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ມີການແບ່ງແຍກເກີດຂຶ້ນໃນບັນດາຜູ້ຄົນ,
ເຖິງຂະໜາດທີ່ພວກເຂົາໄດ້ແຍກກັນໄປ
ທາງນັ້ນທາງນີ້, ໄປຕາມທາງຂອງໃຜລາວ,
ປະໃຫ້ນີໄຟຢູ່ຕາມລຳພັງ, ໃນຂະນະທີ່
ເພິ່ນກຳລັງຢືນຢູ່ທ່າມກາງພວກເຂົາ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟ
ເດີນທາງມຸ້ງໜ້າກັບໄປຫາບ້ານຂອງເພິ່ນ
ເອງ, ໂດຍທີ່ເພິ່ນໄດ້ [ກ]ໄຕ່ຕອງເຖິງເລື່ອງ
ຕ່າງໆທີ່ພຣະຜູ້ເປັນເຈົ້າໄດ້ສະແດງແກ່
ເພິ່ນ.
3 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ໃນ
ຂະນະທີ່ເພິ່ນກຳລັງໄຕ່ຕອງ—ໂດຍທີ່ມີ
ຄວາມເສົ້າສະຫລົດໃຈ ເພາະຄວາມຊົ່ວ
ຮ້າຍຂອງຜູ້ຄົນຊາວນີໄຟ, ວຽກງານລັບ
ແຫ່ງຄວາມມືດຂອງພວກເຂົາ, ແລະ ການ
ຄາດຕະກຳຂອງພວກເຂົາ, ແລະ ການປຸ້ນ
ຈີ້ຂອງພວກເຂົາ, ແລະ ຄວາມຊົ່ວຮ້າຍ
ນາໆປະການຂອງພວກເຂົາ—ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ຂະນະທີ່ເພິ່ນກຳລັງ
ໄຕ່ຕອງໃນໃຈຢູ່ນັ້ນ, ຈົ່ງເບິ່ງ, ສຽງໄດ້ມາ
ຫາເພິ່ນ ມີຄວາມວ່າ:
4 ເຈົ້າເປັນສຸກແລ້ວນີໄຟເພາະສິ່ງທີ່ເຈົ້າ
ເຮັດໄປນັ້ນ; ເພາະເຮົາເຫັນແລ້ວວ່າ ເຈົ້າ

**10** 2 *ກ* ຄມພ ໄຕ່ຕອງ.

ປະກາດພຣະຄຳ ຊຶ່ງເຮົາໄດ້ມອບໃຫ້ແກ່ເຈົ້າ, ແກ່ຜູ້ຄົນ ພວກນີ້ໂດຍ [ກ]ບໍ່ຮູ້ຈັກອິດເມື່ອຍ. ແລະ ເຈົ້າກໍບໍ່ຢ້ານພວກເຂົາເລີຍ, ແລະ ບໍ່ໄດ້ສະແຫວງຫາເພື່ອ [ຂ]ຊີວິດຂອງຕົນເອງ, ແຕ່ກະທຳຕາມ [ຄ]ຄວາມປະສົງຂອງເຮົາ, ແລະ ຮັກສາບັນຍັດຂອງເຮົາ.

5 ແລະ ບັດນີ້, ເພາະເຈົ້າໄດ້ເຮັດການນີ້ໂດຍບໍ່ຮູ້ຈັກອິດເມື່ອຍດັ່ງນັ້ນ, ຈົ່ງເບິ່ງ, ເຮົາຈະປະທານພອນໃຫ້ແກ່ເຈົ້າຕະຫລອດການ; ແລະ ເຮົາຈະເຮັດໃຫ້ເຈົ້າຍິ່ງໃຫຍ່ໃນຄຳເວົ້າ ແລະ ໃນການກະທຳ ແລະ ໃນສັດທາ ແລະ ໃນວຽກງານ; ແທ້ຈິງແລ້ວ, ແມ່ນແຕ່ [ກ]ທຸກສິ່ງທຸກຢ່າງຈະເປັນໄປຕາມ [ຂ]ຄຳເວົ້າຂອງເຈົ້າ, ເພາະວ່າເຈົ້າຈະ [ຄ]ບໍ່ຂໍສິ່ງທີ່ກົງກັນຂ້າມກັບຄວາມປະສົງຂອງເຮົາເລີຍ.

6 ຈົ່ງເບິ່ງ, ເຈົ້າຄືນີໄຟ, ແລະ ເຮົາຄືພຣະເຈົ້າ. ຈົ່ງເບິ່ງ, ເຮົາປະກາດ ແກ່ເຈົ້າຕໍ່ໜ້າເຫລົ່າທູດຂອງເຮົາວ່າ, ເຈົ້າຈະມີອຳນາດເໜືອກວ່າຜູ້ຄົນພວກນີ້, ແລະ ເຮົາຈະລົງໂທດ ໂລກດ້ວຍ [ກ]ຄວາມອຶດຢາກ ແລະ ດ້ວຍພະຍາດໂລຄາ, ແລະ ຄວາມພິນາດຕາມຄວາມຊົ່ວຮ້າຍຂອງຜູ້ຄົນພວກນີ້.

7 ຈົ່ງເບິ່ງ, ເຮົາໄດ້ໃຫ້ອຳນາດແກ່ເຈົ້າ, ຄືສິ່ງໃດທີ່ເຈົ້າຈະ [ກ]ຜະນຶກເທິງແຜ່ນດິນໂລກນີ້ ສິ່ງນັ້ນຈະຖືກຜະນຶກໃນສະຫວັນ; ແລະ ສິ່ງໃດທີ່ເຈົ້າຈະ ແກ້ໃຫ້ຫລຸດເທິງແຜ່ນດິນໂລກນີ້ ສິ່ງນັ້ນຈະຖືກແກ້ໃຫ້ຫລຸດໃນສະຫວັນ; ແລະ ດ້ວຍເຫດນີ້ ເຈົ້າຈະມີອຳນາດໃນບັນດາຜູ້ຄົນພວກນີ້.

8 ແລະ ຖ້າຫາກເຈົ້າຈະກ່າວກັບພຣະວິຫານນີ້ວ່າ ໃຫ້ມັນແຍກອອກເປັນສອງ, ມັນກໍຈະເປັນໄປ.

9 ແລະ ຖ້າເຈົ້າຈະກ່າວກັບ [ກ]ພູໜ່ວຍນີ້ວ່າ ໃຫ້ມັນພັງລົງມາ ແລະ ກັບມາຮາບພຽງ, ມັນກໍຈະເປັນໄປ.

10 ແລະ ຈົ່ງເບິ່ງ, ຖ້າຫາກເຈົ້າຈະກ່າວວ່າ: ພຣະເຈົ້າຈະລົງໂທດຜູ້ຄົນພວກນີ້, ມັນກໍຈະເກີດຂຶ້ນ.

11 ແລະ ບັດນີ້ຈົ່ງເບິ່ງ, ເຮົາສັ່ງໃຫ້ເຈົ້າໄປປະກາດກັບຜູ້ຄົນພວກນີ້, ວ່າອົງພຣະຜູ້ເປັນເຈົ້າ, ຜູ້ຊົງລິດອຳນາດຍິ່ງໃຫຍ່ໄດ້ກ່າວດັ່ງນີ້: ຖ້າຫາກພວກທ່ານບໍ່ກັບໃຈ, ພວກທ່ານຈະຖືກລົງໂທດຈົນເຖິງ [ກ]ຄວາມພິນາດ.

12 ແລະ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ ເວລາພຣະຜູ້ເປັນເຈົ້າຮັບສັ່ງຖ້ອຍຄຳເຫລົ່ານີ້ກັບນີໄຟແລ້ວ, ເພິ່ນໄດ້ຢຸດສະຫງັກ ແລະ ບໍ່ໄດ້ກັບ ໄປເຮືອນຂອງເພິ່ນເລີຍ, ແຕ່ໄດ້ກັບໄປຫາຝູງຊົນທີ່ກະຈັດກະຈາຍກັນຢູ່ທົ່ວແຜ່ນດິນ, ແລະ ເລີ່ມປະກາດຕໍ່ພວກເຂົາເຖິງພຣະຄຳຂອງພຣະຜູ້ເປັນເຈົ້າ ຊຶ່ງໄດ້ຮັບສັ່ງແກ່ເພິ່ນກ່ຽວກັບຄວາມພິນາດຂອງພວກເຂົາ ຖ້າຫາກພວກເຂົາບໍ່ກັບໃຈ.

13 ບັດ ນີ້ ຈົ່ງ ເບິ່ງ, ທັງໆ ທີ່ ສິ່ງ ມະຫັດສະຈັນອັນຍິ່ງໃຫຍ່ ຊຶ່ງນີໄຟໄດ້ເຮັດໄປໃຫ້ຜູ້ຄົນເຫັນກ່ຽວກັບການຕາຍຂອງຫົວໜ້າຜູ້ຕັດສິນ, ພວກເຂົາຍັງເຮັດໃຈແຂງກະດ້າງຢູ່ ແລະ ບໍ່ເຊື່ອຟັງພຣະຄຳຂອງພຣະຜູ້ເປັນເຈົ້າເລີຍ.

14 ສະນັ້ນ ນີໄຟ ຈຶ່ງ ໄດ້ ປະ ກາດ ພຣະ

4 ກ ຄມພ ພາກພຽນ, ຄວາມພາກພຽນ.
ຂ ຄມພ ເສຍສະລະ, ການເສຍສະລະ.
ຄ 3 ນຟ 11:11.
5 ກ 3 ນຟ 18:20; ຄພ 88:63–65.
ຂ ອນ 1:12.
ຄ 2 ນຟ 4:35; ຄພ 46:30.
6 ກ ຮລມ 11:4–18.
7 ກ ມທ 16:19. ຄມພ ຜະນຶກ, ການຜະນຶກ.
9 ກ ມທ 17:20; ຢຄ 4:6; ມມ 8:24; ອທ 12:30.
11 ກ ຮລມ 5:2.

ຄຳຂອງພຣະຜູ້ເປັນເຈົ້າອີກ, ມີຄວາມວ່າ:
ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວ ດັ່ງນີ້, ຖ້າ ຫາກ
ພວກທ່ານບໍ່ກັບໃຈ, ພວກທ່ານຈະຖືກລົງ
ໂທດຈົນໄປສູ່ຄວາມພິນາດ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ນີໄຟປະກາດພຣະຄຳກັບຜູ້ຄົນເຫລົ່ານີ້
ແລ້ວ, ຈົ່ງເບິ່ງ, ພວກເຂົາຍັງເຮັດໃຈແຂງ
ກະດ້າງຢູ່ ແລະ ບໍ່ຍອມເຊື່ອຟັງຄຳເວົ້າ
ຂອງເພິ່ນເລີຍ; ສະນັ້ນ ພວກເຂົາຈຶ່ງໄດ້
ໝິ່ນປະໝາດເພິ່ນ, ແລະ ໄດ້ພະຍາຍາມ
ຈັບເພິ່ນເພື່ອຈະເອົາເພິ່ນເຂົ້າຄຸກ.
16 ແຕ່ຈົ່ງເບິ່ງ, ອຳນາດຂອງພຣະເຈົ້າ
ໄດ້ສະຖິດຢູ່ນຳເພິ່ນ, ແລະ ພວກເຂົາຈຶ່ງ
ຈັບເພິ່ນເຂົ້າຄຸກບໍ່ໄດ້, ເພາະພຣະວິນຍານ
ໄດ້ພາເພິ່ນອອກໄປຈາກທ່າມກາງພວກ
ເຂົາ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນ
ໄດ້ອອກໄປໃນພຣະວິນຍານ, ຈາກຝູງຊົນ
ກຸ່ມໜຶ່ງຫາຝູງຊົນອີກກຸ່ມໜຶ່ງ, ປະກາດ
ພຣະຄຳຂອງພຣະເຈົ້າ, ຈົນວ່າເພິ່ນໄດ້ປະ
ກາດຕໍ່ຜູ້ຄົນໂດຍທົ່ວເຖິງ, ຫລື ໄດ້ສົ່ງມັນ
ໄປຫາບັນດາຜູ້ຄົນທັງໝົດ.
18 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ພວກເຂົາບໍ່ຍອມເຊື່ອຟັງຄຳຂອງເພິ່ນເລີຍ;
ແລະ ເລີ່ມມີການຂັດແຍ້ງກັນຂຶ້ນ, ເຖິງຂະ
ໜາດທີ່ພວກເຂົາໄດ້ແບ່ງແຍກ ແລະ ເລີ່ມ
ຂ້າຟັນກັນດ້ວຍດາບ.
19 ແລະ ປີທີເຈັດສິບເອັດແຫ່ງການປົກ
ຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້
ສິ້ນສຸດລົງດັ່ງນີ້.

## ບົດທີ 11

*ນີໄຟທູນຂໍໃຫ້ພຣະຜູ້ເປັນເຈົ້າປ່ຽນໃຫ້ມີ
ຄວາມອຶດຢາກແທນສົງຄາມ—ຫລາຍຄົນ
ໄດ້ຕາຍໄປ—ພວກເຂົາກັບໃຈ, ແລະ ນີໄຟ
ອ້ອນວອນຕໍ່ພຣະຜູ້ເປັນເຈົ້າໃຫ້ຝົນຕົກ
ລົງມາ—ນີໄຟ ແລະ ລີໄຮໄດ້ຮັບການເປີດ
ເຜີຍຫລາຍຢ່າງ—ພວກໂຈນແກດີອານ
ທັນສ້າງທີ່ໝັ້ນຂອງພວກເຂົາຢູ່ໃນແຜ່ນ
ດິນ. ປະມານ 20–6 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນ
ປີທີເຈັດສິບສອງແຫ່ງການປົກຄອງຂອງຜູ້
ຕັດສິນ ມັນໄດ້ມີການຂັດແຍ້ງກັນຫລາຍ
ຂຶ້ນ, ເຖິງຂະໜາດທີ່ມັນມີສົງຄາມເກີດຂຶ້ນ
ຕະຫລອດທົ່ວແຜ່ນດິນໃນບັນດາຜູ້ຄົນ
ຂອງນີໄຟທັງໝົດ.
2 ແລະ ມັນແມ່ນພວກໂຈນ [a]ລັບພັກ
ນີ້ທີ່ໄດ້ສ້າງວຽກງານແຫ່ງຄວາມພິນາດ
ແລະ ຄວາມຊົ່ວຮ້າຍ. ແລະ ເຮັດເສິກຢູ່
ຕະຫລອດປີນັ້ນ; ແລະ ໃນປີທີເຈັດສິບ
ສາມກໍຍັງມີສົງຄາມຢູ່ອີກ.
3 ແລະ ເຫດການໄດ້ບັງເກີດຂຶ້ນໃນປີ
ນີ້ ນີໄຟໄດ້ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ມີ
ຄວາມວ່າ:
4 ໂອ້ ພຣະຜູ້ເປັນເຈົ້າ, ຂໍຢ່າປ່ອຍໃຫ້ຜູ້
ຄົນພວກນີ້ຖືກທຳລາຍດ້ວຍດາບເລີຍ; ແຕ່
ໂອ້ ພຣະອົງເຈົ້າເອີຍ, ແຕ່ຂໍໃຫ້ມີ [a]ຄວາມ
ອຶດຢາກແທນທົ່ວແຜ່ນດິນນີ້ເຖີດ, ເພື່ອຈະ
ໄດ້ກະຕຸ້ນພວກເຂົາໃຫ້ລະນຶກເຖິງພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ,
ແລະ ບາງທີພວກເຂົາອາດຈະກັບໃຈ ແລະ
ຫັນມາຫາພຣະອົງ.
5 ແລະ ມັນກໍໄດ້ເປັນໄປຕາມຄຳອ້ອນ
ວອນຂອງນີໄຟ. ແລະ ມັນຈຶ່ງມີຄວາມອຶດ
ຢາກຫລາຍທີ່ສຸດໃນແຜ່ນດິນ ໃນບັນດາຜູ້
ຄົນຂອງນີໄຟທັງໝົດ. ແລະ ມັນມີຄວາມ

**11** 2 *ກ* ຮລມ 6:18–24; 11:25–26. 4 *ກ* 1 ກສ 17:1; ຮລມ 10:6.

ອຶດຢາກຕິດຕໍ່ກັນໄປ ຈົນຮອດປີທີເຈັດສິບ
ສີ່ ກໍຍັງມີຄວາມອຶດຢາກຢູ່, ແລະ ວຽກງານ
ແຫ່ງຄວາມພິນາດດ້ວຍດາບໄດ້ຢຸດຕິລົງ,
ແຕ່ວ່າຄວາມອຶດຢາກກັບມາຮ້າຍແຮງຂຶ້ນ.
6 ແລະ ຄວາມອຶດຢາກນີ້ໄດ້ມີຢູ່ຕໍ່ໄປຈົນ
ຮອດປີທີເຈັດສິບຫ້າອີກ. ເພາະແຜ່ນດິນ
ຖືກສາບແຊ່ງຈົນວ່າມັນແຫ້ງແລ້ງ ບໍ່ໃຫ້ພືດ
ພັນອອກໝາກເກີດຜົນໃນລະດູການ; ແລະ
ທັງແຜ່ນດິນໂລກຖືກສາບແຊ່ງ ແມ່ນແຕ່
ໃນບັນດາຊາວເລມັນເຊັ່ນດຽວກັບໃນບັນ
ດາຊາວນີໄຟ ຈົນພວກເຂົາເປັນພັນໆຖືກ
ລົງໂທດຈົນຕາຍໄປໃນແຜ່ນດິນສ່ວນທີ່ມີ
ຄົນຊົ່ວຢ່າງຫລວງຫລາຍອາໄສຢູ່.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນ
ເຫັນວ່າຕົນເອງກຳລັງຈະຕາຍໄປເພາະ
ຄວາມອຶດຢາກ, ແລະ ພວກເຂົາຈຶ່ງເລີ່ມ
[ກ]ສຳນຶກເຖິງພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ; ແລະ ພວກເຂົາເລີ່ມ
ຄິດເຖິງຄຳເວົ້າຂອງນີໄຟ.
8 ແລະ ຜູ້ຄົນເລີ່ມວິງວອນຫົວໜ້າຜູ້ຕັດ
ສິນ ແລະ ຜູ້ນຳຂອງພວກເຂົາເຫລົ່ານັ້ນ
ໃຫ້ເວົ້າກັບນີໄຟວ່າ: ຈົ່ງເບິ່ງ, ພວກເຮົາຮູ້
ແລ້ວວ່າ ທ່ານເປັນຄົນຂອງພຣະເຈົ້າ, ແລະ
ສະນັ້ນ ຂໍໃຫ້ທ່ານຈົ່ງຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງພວກເຮົາແດ່
ທ້ອນ ເພື່ອໃຫ້ພຣະອົງເອົາຄວາມອຶດຢາກ
ນີ້ໄປຈາກພວກເຮົາ, ຢ້ານວ່າ [ກ]ຄຳທັງໝົດ
ຊຶ່ງທ່ານໄດ້ເວົ້າໄວ້ກ່ຽວກັບຄວາມພິນາດ
ຂອງພວກເຮົານັ້ນຈະເກີດເປັນຈິງ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ຜູ້ຕັດສິນໄດ້ເວົ້າກັບນີໄຟຕາມຄຳທີ່ຜູ້ຄົນ
ຕ້ອງການໃຫ້ເວົ້າ. ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ເວລານີໄຟເຫັນວ່າຜູ້ຄົນກັບໃຈ
ແລ້ວ ແລະ ໄດ້ຖ່ອມຕົວຢູ່ໃນຜ້າກະສອບ,
ແລ້ວເພິ່ນຈຶ່ງໄດ້ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ,
ມີຄວາມວ່າ:
10 ໂອ້ ພຣະຜູ້ເປັນເຈົ້າ, ຈົ່ງທອດພຣະ
ເນດເຖີດ ຜູ້ຄົນພວກນີ້ໄດ້ກັບໃຈແລ້ວ;
ແລະ ພວກເຂົາໄດ້ກວາດລ້າງພັກພວກ
ຂອງແກດີອານທັນອອກໄປຈາກບັນດາ
ພວກເຂົາແລ້ວ ເຖິງຂະໜາດທີ່ພວກເຂົາ
ໄດ້ສູນສິ້ນໄປ, ແລະ ພວກເຂົາໄດ້ຝັງແຜນ
ລັບຂອງພວກເຂົາໄວ້ໃນແຜ່ນດິນແລ້ວ.
11 ບັດນີ້, ໂອ້ ພຣະຜູ້ເປັນເຈົ້າ, ເພາະ
ຄວາມຖ່ອມຕົວຂອງພວກເຂົາເຫລົ່ານີ້ ຂໍ
ໃຫ້ພຣະອົງຈົ່ງຖອນພຣະພິໂລດຂອງພຣະ
ອົງໄປເສຍ, ແລະ ຂໍໃຫ້ພຣະອົງຈົ່ງຜ່ອນ
ຄາຍພຣະພິໂລດຂອງພຣະອົງກັບຄວາມ
ພິນາດຂອງຄົນຊົ່ວເຫລົ່ານີ້ ຊຶ່ງພຣະອົງໄດ້
ທຳລາຍໄປແລ້ວ.
12 ໂອ້ ພຣະຜູ້ເປັນເຈົ້າ, ຂໍໃຫ້ພຣະອົງ
ເອົາພຣະພິໂລດຂອງພຣະອົງໄປເຖີດ, ແທ້
ຈິງແລ້ວ, ຈົ່ງເອົາພຣະພິໂລດອັນຮຸນແຮງ
ຂອງພຣະອົງໄປ, ແລະ ຈົ່ງເຮັດໃຫ້ຄວາມ
ອຶດຢາກຢູ່ໃນແຜ່ນດິນນີ້ຢຸດລົງດ້ວຍເຖີດ.
13 ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງໂປດເຊື່ອ
ຟັງຂ້ານ້ອຍດ້ວຍເຖີດ, ແລະ ຂໍໃຫ້ເປັນໄປ
ຕາມຄຳເວົ້າຂອງຂ້ານ້ອຍດ້ວຍເຖີດ, ແລະ
ຂໍຈົ່ງສົ່ງ [ກ]ຝົນລົງມາເທິງພື້ນແຜ່ນດິນໂລກ
ດ້ວຍເຖີດ ເພື່ອມັນຈະອອກໝາກຂອງມັນ,
ແລະ ອອກພືດຂອງມັນໃນລະດູຂອງພືດ.
14 ໂອ້ ພຣະອົງເຈົ້າເອີຍ, ພຣະອົງໄດ້
ຍິນ [ກ]ຖ້ອຍຄຳຂອງຂ້ານ້ອຍ ເວລາຂ້ານ້ອຍ
ທູນວ່າ ຂໍໃຫ້ມີຄວາມອຶດຢາກເກີດຂຶ້ນເພື່ອ
ພະຍາດໂລຄາທີ່ເກີດມາຈາກດາບຈະໄດ້
ຢຸດຕິລົງ, ແລະ ຂ້ານ້ອຍຮູ້ວ່າ ພຣະອົງໄດ້
ຍິນຄຳອ້ອນວອນຂອງຂ້ານ້ອຍໃນເວລານີ້
ເພາະພຣະອົງໄດ້ກ່າວວ່າ: ຖ້າຫາກຜູ້ຄົນ

7 *ກ* ຮລມ 12:3.
8 *ກ* ຮລມ 10:11–14.
13 *ກ* 1 ກສ 18:1, 41–46.
14 *ກ* ຮລມ 11:4.

ພວກນີ້ກັບໃຈ, ແລ້ວເຮົາຈະໄວ້ຊີວິດຂອງ
ພວກເຂົາ.
15 ແທ້ ຈິງ ແລ້ວ, ໂອ້ ພຣະຜູ້ ເປັນເຈົ້າ,
ແລະ ພຣະ ອົງ ເຫັນ ວ່າ ພວກ ເຂົາ ກັບ ໃຈ
ແລ້ວ, ເພາະຄວາມອຶດຢາກ ແລະ ພະຍາດ
ໂລຄາ ແລະ ຄວາມພິນາດ ຊຶ່ງ ເກີດ ກັບ
ພວກເຂົາ.
16 ແລະ ບັດ ນີ້, ໂອ້ ພຣະຜູ້ ເປັນເຈົ້າ,
ພຣະ ອົງ ຈະບໍ່ ເອົາພຣະພິໂລດຂອງພຣະ
ອົງ ໄປ ບໍ, ແລະ ຈະ ບໍ່ ທົດ ລອງ ອີກ ບໍ ວ່າ
ພວກເຂົາຈະຮັບໃຊ້ພຣະອົງຫລືບໍ່? ແລະ
ຖ້າຫາກເປັນເຊັ່ນນັ້ນ, ໂອ້ ພຣະຜູ້ເປັນເຈົ້າ,
ພຣະອົງຈະອວຍພອນພວກເຂົາໄດ້ຕາມ
ພຣະຄຳຂອງພຣະອົງ ຊຶ່ງພຣະອົງໄດ້ກ່າວ
ໄວ້.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີທີເຈັດສິບຫົກ ພຣະຜູ້ເປັນເຈົ້າໄດ້ ເອົາ
ພຣະ ພິ ໂລດຂອງພຣະອົງໄປຈາກຜູ້ຄົນ,
ແລະ ໄດ້ເຮັດໃຫ້ *ກ*ຝົນຕົກລົງມາເທິງແຜ່ນ
ດິນ, ເຖິງຂະໜາດທີ່ມັນໄດ້ອອກໝາກຂອງ
ມັນໃນລະດູທີ່ມີໝາກ. ແລະ ເຫດການໄດ້
ບັງເກີດຂຶ້ນຄື ມັນໄດ້ອອກພືດຂອງມັນໃນ
ລະດູທີ່ມີພືດ.
18 ແລະ ຈົ່ງເບິ່ງ, ຜູ້ຄົນໄດ້ມີຄວາມປິຕິ
ຍິນດີ ແລະ ໄດ້ຖວາຍບາລະມີແດ່ພຣະ
ເຈົ້າ, ແລະ ທັງພື້ນແຜ່ນດິນກໍເຕັມໄປດ້ວຍ
ຄວາມປິຕິຍິນດີ; ແລະ ພວກເຂົາບໍ່ໄດ້ພະ
ຍາຍາມທຳລາຍນີໄຟອີກຕໍ່ໄປ, ແຕ່ພວກ
ເຂົາໄດ້ນັບຖືເພິ່ນວ່າເປັນສາດສະດາ *ກ*ຜູ້
ຍິ່ງໃຫຍ່, ແລະ ເປັນຄົນຂອງພຣະເຈົ້າ,
ໂດຍທີ່ໄດ້ຮັບອຳນາດ ແລະ ສິດອຳນາດ
ອັນຍິ່ງໃຫຍ່ຈາກພຣະເຈົ້າ.
19 ແລະ ຈົ່ງ ເບິ່ງ, ລີໄຮນ້ອງຊາຍຂອງ
ເພິ່ນກໍບໍ່ ໄດ້ *ກ*ນ້ອຍໜ້າໄປກວ່າເພິ່ນໃນ
ເລື່ອງກ່ຽວກັບຄວາມຊອບທຳນີ້ເລີຍ.
20 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ດັ່ງ
ນີ້ຄື ຜູ້ຄົນຂອງນີໄຟໄດ້ເລີ່ມຈະເລີນຮຸ່ງ
ເຮືອງຂຶ້ນອີກໃນແຜ່ນດິນ, ແລະ ເລີ່ມເສີມ
ສ້າງແຜ່ນດິນທີ່ຮົກຮ້າງຂອງພວກເຂົາຂຶ້ນ,
ແລະ ເລີ່ມມີຜູ້ຄົນເພີ່ມທະວີຂຶ້ນ ແລະ ໄດ້
ຂະຫຍາຍອອກໄປຈົນວ່າພວກເຂົາໄດ້
ປົກຄຸມທັງພື້ນແຜ່ນດິນທັງທາງເໜືອ ແລະ
ທາງໃຕ້, ຈາກທະເລທາງຕາເວັນຕົກຫາ
ທະເລທາງຕາເວັນອອກ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີ
ເຈັດສິບຫົກໄດ້ສິ້ນສຸດລົງດ້ວຍສັນຕິສຸກ.
ແລະ ປີທີເຈັດສິບເຈັດກໍເລີ່ມຕົ້ນດ້ວຍສັນຕິ
ສຸກ; ແລະ *ກ*ສາດສະໜາຈັກກໍໄດ້ຂະຫຍາຍ
ໄປທົ່ວພື້ນແຜ່ນດິນ; ແລະ ຜູ້ຄົນສ່ວນ
ຫລາຍ ທັງຊາວເລມັນ ແລະ ຊາວນີໄຟໄດ້
ເຂົ້າຮ່ວມສາດສະໜາຈັກ; ແລະ ພວກເຂົາ
ໄດ້ມີສັນຕິສຸກຫລາຍທີ່ສຸດໃນແຜ່ນດິນ;
ແລະ ປີທີເຈັດສິບເຈັດໄດ້ສິ້ນສຸດລົງດັ່ງນີ້.
22 ແລະ ພວກເຂົາໄດ້ມີສັນຕິສຸກໃນປີທີ
ເຈັດສິບແປດອີກ ນອກຈາກວ່າມີການຂັດ
ແຍ້ງກັນຂຶ້ນເລັກໜ້ອຍກ່ຽວກັບຫລັກທຳ
ຂອງຄຳສອນ ຊຶ່ງສາດສະດາທັງຫລາຍໄດ້
ຊຽນໄວ້.
23 ແລະ ໃນປີທີເຈັດສິບເກົ້າກໍເລີ່ມມີ
ການຜິດຖຽງກັນຂຶ້ນ. ແຕ່ເຫດການໄດ້ບັງ
ເກີດ ຂຶ້ນຄື ນີໄຟກັບລີໄຮ, ແລະ ພີ່ນ້ອງ
ຂອງພວກເພິ່ນຫລາຍຄົນ ຜູ້ທີ່ຮູ້ຈັກກ່ຽວກັບ
ຫລັກທຳອັນແທ້ຈິງຂອງຄຳສອນ ໂດຍທີ່ໄດ້
ຮັບ *ກ*ການເປີດເຜີຍທຸກໆມື້, ສະນັ້ນ ພວກ
ເພິ່ນຈຶ່ງໄດ້ສັ່ງສອນຜູ້ຄົນ, ເຖິງຂະໜາດ
ທີ່ພວກເພິ່ນເຮັດໃຫ້ການຜິດຖຽງກັນຂອງ
ພວກເຂົາ ສິ້ນສຸດລົງໃນປີດຽວກັນນັ້ນ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ

17 *ກ* ພບຍ 11:13–17.
18 *ກ* ຮລມ 10:5–11.
19 *ກ* ຮລມ 5:36–44.
21 *ກ* ຄນພ ສາດສະໜາຈັກຂອງພຣະເຢຊູຄຣິດ.
23 *ກ* ແອວ 26:22; ຄພ 107:19.

ປີ ທີ ແປດ ສິບ ແຫ່ງ ການ ປົກ ຄອງ ຂອງ ຜູ້
ຕັດສິນດູແລຜູ້ຄົນຂອງນີໄຟ, ມັນມີຜູ້ຄົນ
ຈຳນວນໜຶ່ງຜູ້ທີ່ແຍກອອກໄປຈາກຜູ້ຄົນ
ຂອງນີໄຟບໍ່ເທົ່າໃດປີມານີ້ ໄດ້ຂ້າມໄປຫາ
ຊາວເລມັນ ແລະ ຮັບເອົາຊື່ຊາວເລມັນ,
ແລະ ມີຄົນອີກຈຳນວນໜຶ່ງ ຊຶ່ງເປັນຜູ້ສືບ
ຕະກຸນແທ້ຈິງຂອງຊາວເລມັນຖືກພວກທີ່
ແຍກອອກໄປນັ້ນຍຸຍົງໃຫ້ຄຽດແຄ້ນໃຫ້ພີ່
ນ້ອງຂອງຕົນ, ສະນັ້ນ ພວກເຂົາຈຶ່ງເລີ່ມ
ເຮັດສົງຄາມກັບພີ່ນ້ອງຂອງຕົນ.
25 ແລະ ພວກເຂົາໄດ້ເຮັດການຄາດຕະ
ກຳ ແລະ ປຸ້ນຈີ້; ຈາກນັ້ນພວກເຂົາກໍຖອຍ
ກັບເຂົ້າໄປໃນພູເຂົາ, ແລະ ເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານ ແລະ ໃນບ່ອນລັບຂອງ
ພວກເຂົາ, ລີ້ຊ່ອນຕົວຢູ່ເພື່ອບໍ່ໃຫ້ຜູ້ໃດ
ພົບເຫັນ, ໂດຍມີຈຳນວນຄົນເພີ່ມທະວີຂຶ້ນ
ທຸກໆວັນ, ຕາບໃດທີ່ມີຜູ້ຄົນເປັນຈຳນວນ
ຫລວງຫລາຍແຍກອອກໄປຫາພວກເຂົາ.
26 ແລະ ໃນເວລາໜຶ່ງ, ແທ້ຈິງແລ້ວ, ໃນ
ເວລາບໍ່ເທົ່າໃດປີ, ພວກເຂົາໄດ້ກັບກາຍ
ມາເປັນໂຈນພັກໃຫຍ່ທີ່ສຸດ; ແລະ ພວກ
ເຂົາໄດ້ຄົ້ນຫາແຜນລັບທັງໝົດຂອງແກດີ
ອານທັນອອກມາ; ແລະ ພວກເຂົາໄດ້ກາຍ
ມາເປັນພວກໂຈນຂອງແກດີອານທັນດັ່ງນີ້.
27 ບັດນີ້ຈົ່ງເບິ່ງ, ພວກໂຈນເຫລົ່ານີ້ໄດ້
ສ້າງຄວາມເດືອດຮ້ອນຢ່າງໃຫຍ່ຫລວງ,
ແທ້ຈິງແລ້ວ, ໄດ້ສ້າງຄວາມພິນາດອັນ
ໃຫຍ່ຫລວງໃນບັນດາຜູ້ຄົນຂອງນີໄຟ,
ແລະ ໃນບັນດາຜູ້ຄົນຊາວເລມັນນຳອີກ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ເປັນການສົມຄວນທີ່ຈະຢຸດຕິວຽກງານ
ແຫ່ງຄວາມພິນາດນີ້; ສະນັ້ນ ພວກເຂົາຈຶ່ງ
ໄດ້ສົ່ງກອງທັບທີ່ມີກຳລັງຄົນອັນເຂັ້ມແຂງ
ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ ແລະ
ເຂົ້າໄປໃນພູເຂົາ ເພື່ອຊອກຫາພວກໂຈນ
ພັກນີ້, ເພື່ອຈະໄດ້ທຳລາຍພວກເຂົາເສຍ.
29 ແຕ່ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ
ຄື ໃນປີດຽວກັນນັ້ນ ພວກເຂົາໄດ້ຖືກຂັບ
ໄລ່ກັບຄືນໄປຫາແຜ່ນດິນຂອງພວກເຂົາຄື
ເກົ່າ. ແລະ ປີທີແປດສິບແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້.
30 ແລະ ເຫດການໄດ້ບັງເກີດຂຶ້ນໃນ
ຕົ້ນປີທີແປດສິບເອັດຄື ພວກເຂົາໄດ້ຍົກ
ອອກໄປຕໍ່ສູ້ກັບພວກໂຈນພັກນີ້ອີກ, ແລະ
ໄດ້ທຳລາຍພວກເຂົາເປັນຈຳນວນຫລວງ
ຫລາຍ; ແລະ ພວກເຂົາກໍໄດ້ຮັບການເສຍ
ຫາຍຢ່າງໜັກຄືກັນ.
31 ແລະ ພວກເຂົາໄດ້ຖືກບັງຄັບໃຫ້
ໜີອອກຈາກຖິ່ນແຫ້ງແລ້ງກັນດານ ແລະ
ອອກຈາກພູເຂົາຄືນໄປຫາແຜ່ນດິນຂອງ
ພວກເຂົາເອງອີກ ເພາະມັນມີພວກໂຈນ
ເປັນຈຳນວນຫລວງຫລາຍຊຶ່ງມີຢູ່ທົ່ວໄປ
ໃນພູເຂົາ ແລະ ໃນຖິ່ນແຫ້ງແລ້ງກັນດານ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີ
ນີ້ໄດ້ສິ້ນສຸດລົງດັ່ງນີ້. ແລະ ພວກໂຈນໄດ້
ມີກຳລັງເພີ່ມຂຶ້ນຕື່ມອີກ, ແລະ ເຂັ້ມແຂງ
ຂຶ້ນ, ເຖິງຂະໜາດທີ່ພວກເຂົາສາມາດຕໍ່
ຕ້ານທັງກອງທັບຂອງຊາວນີໄຟ ແລະ ຂອງ
ຊາວເລມັນນຳອີກ; ແລະ ພວກເຂົາໄດ້ນຳ
ເອົາຄວາມຢ້ານກົວຢ່າງໃຫຍ່ຫລວງມາໃຫ້
ຜູ້ຄົນທົ່ວພື້ນແຜ່ນດິນ.
33 ແທ້ຈິງແລ້ວ, ພວກເຂົາໄດ້ເຂົ້າໄປ
ຫາແຜ່ນດິນພາກສ່ວນຕ່າງໆຫລາຍແຫ່ງ,
ແລະ ໄດ້ເຮັດຄວາມເສຍຫາຍອັນໃຫຍ່
ຫລວງໃຫ້ຄົນທັງຫລາຍ; ແທ້ຈິງແລ້ວ, ໄດ້
ຂ້າຜູ້ຄົນຢ່າງຫລວງຫລາຍ ແລະ ໄດ້ຈັບ
ເອົາຫລາຍຄົນໄປເປັນຊະເລີຍໃນຖິ່ນແຫ້ງ
ແລ້ງກັນດານ, ແທ້ຈິງແລ້ວ, ຍິ່ງໄປກວ່ານັ້ນ
ໂດຍສະເພາະພວກຜູ້ຍິງຂອງພວກເຂົາ
ແລະ ເດັກນ້ອຍຂອງພວກເຂົາ.
34 ບັດນີ້ຄວາມຊົ່ວອັນໃຫຍ່ຫລວງນີ້ຊຶ່ງ

ມາສູ່ຜູ້ຄົນເພາະຄວາມຊົ່ວຮ້າຍຂອງພວກ
ເຂົາ, ມັນໄດ້ປຸກໃຫ້ພວກເຂົາຕື່ນອີກ ເພື່ອ
ໃຫ້ພວກເຂົາລະນຶກເຖິງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຂົາ.
35 ແລະ ປີທີແປດສິບເອັດແຫ່ງການປົກ
ຄອງຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້.
36 ແລະ ໃນປີທີແປດສິບສອງ ພວກເຂົາ
ໄດ້ເລີ່ມ [ກ]ລືມພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ. ແລະ ໃນປີທີແປດສິບ
ສາມ ພວກເຂົາກໍຍິ່ງເກັ່ງກ້າຫລາຍຂຶ້ນໃນ
ຄວາມຊົ່ວຮ້າຍ. ແລະ ໃນປີທີແປດສິບສີ່
ພວກເຂົາບໍ່ໄດ້ແກ້ໄຂທິດທາງຂອງພວກ
ເຂົາເລີຍ.
37 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ແປດສິບຫ້າ ພວກເຂົາໄດ້ແກ່ກ້າຫລາຍຂຶ້ນ
ໃນຄວາມທະນົງຕົວ ແລະ ໃນຄວາມຊົ່ວ
ຮ້າຍຂອງພວກເຂົາ; ແລະ ພວກເຂົາກຳລັງ
ສຸກອີກດັ່ງນັ້ນເພື່ອຄວາມພິນາດ.
38 ແລະ ປີທີແປດສິບຫ້າໄດ້ສິ້ນສຸດລົງ
ດັ່ງນີ້.

## ບົດທີ 12

*ມະນຸດບໍ່ໝັ້ນຄົງ ແລະ ໂງ່ຈ້າ ແລະ ວ່ອງໄວທີ່ຈະເຮັດຄວາມຊົ່ວ—ພຣະຜູ້ເປັນເຈົ້າຕີສອນຜູ້ຄົນຂອງພຣະອົງ—ມະນຸດບໍ່ມີຄຸນຄ່າຫຍັງເລີຍຖ້າຈະປຽບທຽບໃສ່ກັບອຳນາດຂອງພຣະເຈົ້າ—ໃນວັນແຫ່ງການພິພາກສາ, ມະນຸດຈະໄດ້ຮັບຊີວິດອັນເປັນນິດ ຫລື ໄດ້ຮັບຄວາມອັບປະໂຫຍດອັນເປັນນິດ. ປະມານ 6 ປີ ກ່ອນ ຄ.ສ.*

1 ແລະ ພວກເຮົາຈຶ່ງເຫັນໄດ້ເຖິງຄວາມ
ບໍ່ຖືກຕ້ອງ ແລະ ຄວາມບໍ່ໝັກແໜ້ນຂອງ
ໃຈຂອງລູກຫລານມະນຸດ ດັ່ງນີ້ວ່າ ມັນ
ເປັນໄປແນວໃດ; ແທ້ຈິງແລ້ວ, ພວກເຮົາ
ສາມາດເຫັນໄດ້ວ່າ ໃນພຣະກະລຸນາທິຄຸນ
ອັນບໍ່ມີຂອບເຂດຂອງພຣະຜູ້ເປັນເຈົ້າ ໄດ້
ປະທານພອນ ແລະ ເຮັດໃຫ້ຜູ້ທີ່ [ກ]ໄວ້ວາງ
ໃຈໃນພຣະອົງ [ຂ]ຈະເລີນຮຸ່ງເຮືອງຂຶ້ນ.
2 ແທ້ຈິງແລ້ວ, ແລະ ພວກເຮົາຈະເຫັນ
ໄດ້ໃນເວລາທີ່ພຣະອົງເຮັດໃຫ້ຜູ້ຄົນຂອງ
ພຣະອົງຈະເລີນຮຸ່ງເຮືອງຂຶ້ນ, ແທ້ຈິງແລ້ວ,
ໃນການເພີ່ມພູນໄຮ່ນາຂອງພວກເຂົາ, ຝູງ
ສັດຂອງພວກເຂົາ ແລະ ຝູງສັດໃຊ້ແຮງ
ງານຂອງພວກເຂົາ, ແລະ ຄຳຂອງພວກ
ເຂົາ, ແລະ ເງິນຂອງພວກເຂົາ, ແລະ ສິ່ງ
ຂອງມີຄ່ານາໆປະການຂອງພວກເຂົາ
ແລະ ສິ່ງຂອງທີ່ເຮັດດ້ວຍຝີມືອັນປານີດ
ຂອງພວກເຂົາ, ໄວ້ຊີວິດຂອງພວກເຂົາ,
ແລະ ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳ
ມືຂອງສັດຕູ; ເຮັດໃຫ້ໃຈຂອງສັດຕູຂອງ
ພວກເຂົາອ່ອນລົງ ເພື່ອພວກເຂົາຈະບໍ່ໄດ້
ມາເຮັດສົງຄາມກັບພວກເຂົາອີກ; ແທ້ຈິງ
ແລ້ວ, ແລະ ໂດຍສະຫລຸບ, ກະທຳທຸກສິ່ງ
ທຸກຢ່າງເພື່ອຄວາມຜາສຸກ ແລະ ຄວາມສຸກ
ສະບາຍຂອງຜູ້ຄົນຂອງພຣະອົງ; ແທ້ຈິງ
ແລ້ວ, ມັນກໍຍັງມີຕອນທີ່ພວກເຂົາເຮັດໃຈ
[ກ]ແຂງກະດ້າງຢູ່ ແລະ ໄດ້ຫລົງລືມພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ,
ແລະ ໄດ້ [ຂ]ຢຽບຢ່ຳພຣະຜູ້ບໍລິສຸດໄວ້ໃຕ້ຕີນ
ຂອງພວກເຂົາ—ແທ້ຈິງແລ້ວ, ແລະ ທັງ
ໝົດນີ້ຍ້ອນວ່າຄວາມສະບາຍຂອງພວກ
ເຂົາ, ແລະ ຄວາມຈະເລີນຮຸ່ງເຮືອງຢ່າງຍິ່ງ
ຂອງພວກເຂົາ.

36 *ກ* ແອວ 46:8.
**12** 1 *ກ* ພສສ 36:7–8;
2 ນຟ 22:2;
ມຊຢ 4:6.
ຄມພ ໄວ້ວາງໃຈ,
ຄວາມໄວ້ວາງໃຈ.
*ຂ* 2 ຂຄ 26:5;
ພສສ 1:2–3.
2 *ກ* ຄມພ ປະຖິ້ມຄວາມເຊື່ອ,
ການປະຖິ້ມຄວາມເຊື່ອ.
*ຂ* ແອວ 5:53;
3 ນຟ 28:35.

3 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ຖ້າຫາກພຣະຜູ້ເປັນເຈົ້າບໍ່ [ກ]ຕີສອນຜູ້ຄົນຂອງພຣະອົງດ້ວຍຄວາມທຸກນາໆປະການ, ແທ້ຈິງແລ້ວ, ຖ້າຫາກພຣະອົງບໍ່ສະເດັດມາຢ້ຽມຢາມພວກເຂົາດ້ວຍຄວາມຕາຍ ແລະ ດ້ວຍຄວາມຢ້ານກົວຫລາຍທີ່ສຸດ, ແລະ ດ້ວຍຄວາມອຶດຢາກ, ແລະ ດ້ວຍພະຍາດໂລຄາ, ພວກເຂົາກໍຈະບໍ່ [ຂ]ລະນຶກເຖິງພຣະອົງເລີຍ.

4 ໂອ້ ລູກຫລານມະນຸດ ເຈົ້າຊ່າງມາໂງ່ແທ້ນໍ, ແລະ ອວດດີແທ້ນໍ, ແລະ ຊົ່ວແທ້ນໍ, ແລະ ຕ່ຳຊ້າແທ້ນໍ, ແລະ [ກ]ວ່ອງໄວແທ້ນໍທີ່ຈະເຮັດຄວາມຊົ່ວຮ້າຍ, ແລະ ຊັກຊ້າແທ້ນໍທີ່ຈະເຮັດຄວາມດີ; ແທ້ຈິງແລ້ວ, ວ່ອງໄວແທ້ນໍທີ່ຈະເຊື່ອຟັງຄຳເວົ້າຂອງມານຮ້າຍ ແລະ [ຂ]ໝົກໝຸ້ນຢູ່ກັບສິ່ງທີ່ບໍ່ມີປະໂຫຍດຂອງໂລກ!

5 ແທ້ຈິງແລ້ວ, ວ່ອງໄວແທ້ນໍທີ່ຈະລະເມີເພີ້ຝັນດ້ວຍ [ກ]ຄວາມທະນົງຕົວ; ແທ້ຈິງແລ້ວ, ວ່ອງໄວແທ້ນໍທີ່ຈະອວດອ້າງ ແລະ ເຮັດນາໆປະການຊຶ່ງເປັນຄວາມຊົ່ວຮ້າຍ; ແລະ ຊັກຊ້າແທ້ນໍທີ່ຈະລະນຶກເຖິງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແລະ ບໍ່ໄດ້ຕັ້ງໃຈຟັງຄຳແນະນຳຂອງພຣະອົງ, ແທ້ຈິງແລ້ວ, ຊັກຊ້າແທ້ນໍທີ່ຈະ [ຂ]ເດີນໃນທາງແຫ່ງປັນຍາ!

6 ຈົ່ງເບິ່ງ, ພວກເຂົາບໍ່ປາດຖະໜາທີ່ຈະໃຫ້ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ຜູ້ [ກ]ສ້າງພວກເຂົາ, [ຂ]ປົກຄອງພວກເຂົາ, ແລະ ຄອບຄອງດູແລພວກເຂົາ; ທັງໆທີ່ພຣະກະລຸນາທິຄຸນອັນຍິ່ງໃຫຍ່ຂອງພຣະອົງ ແລະ ພຣະເມດຕາຂອງພຣະອົງມີຕໍ່ພວກເຂົາ, ພວກເຂົາຍັງຖືວ່າຄຳແນະນຳຂອງພຣະອົງບໍ່ມີຄ່າ, ແລະ ພວກເຂົາບໍ່ຍອມໃຫ້ພຣະອົງເປັນຜູ້ນຳທາງຂອງພວກເຂົາ.

7 ໂອ້ ລູກຫລານມະນຸດເອີຍ ເຈົ້າຊ່າງມາ [ກ]ບໍ່ມີຄຸນຄ່າຫຍັງເລີຍແທ້ນໍ; ແທ້ຈິງແລ້ວ, ພວກເຂົາຍັງນ້ອຍໄປກວ່າຂີ້ຝຸ່ນດິນຂອງແຜ່ນດິນໂລກ.

8 ເພາະຈົ່ງເບິ່ງ, ຂີ້ຝຸ່ນຂອງແຜ່ນດິນໂລກຍັງສາມາດເຄື່ອນໄຫວໄປມາທາງນັ້ນທາງນີ້ໄດ້, ເພື່ອແຍກອອກຈາກກັນດ້ວຍການບັນຊາຂອງພຣະເຈົ້າຜູ້ຍິ່ງໃຫຍ່ ແລະ ເປັນນິດຂອງພວກເຮົາ.

9 ແທ້ຈິງແລ້ວ, ຈົ່ງເບິ່ງ ດ້ວຍສຸລະສຽງຂອງພຣະອົງ ເນີນພູ ແລະ ພູເຂົາສັ່ນ ແລະ [ກ]ຫວັ່ນໄຫວ.

10 ແລະ ໂດຍ [ກ]ອຳນາດແຫ່ງສຸລະສຽງຂອງພຣະອົງ ມັນຈຶ່ງແຕກອອກ, ແລະ ກັບມາຮາບພຽງ ແລະ ກາຍມາເປັນຮ່ອມພູ.

11 ແທ້ຈິງແລ້ວ, ໂດຍອຳນາດແຫ່ງສຸລະສຽງຂອງພຣະອົງ [ກ]ທັງແຜ່ນດິນໂລກສັ່ນສະເທືອນ;

12 ແທ້ຈິງແລ້ວ, ໂດຍອຳນາດແຫ່ງສຸລະສຽງຂອງພຣະອົງ, ຫີນຮາກຖານສັ່ນສະເທືອນ, ເຖິງໃຈກາງ.

13 ແທ້ຈິງແລ້ວ, ແລະ ຖ້າຫາກພຣະອົງກ່າວກັບແຜ່ນດິນໂລກວ່າ—ຈົ່ງເລື່ອນໄປ—ມັນກໍຈະເລື່ອນໄປ.

---

3 *ກ* ມຊຢ 23:21; ຄພ 98:21; 101:8.
*ຂ* ອມ 4:6–11.
4 *ກ* ອພຍ 32:8.
*ຂ* ມທ 15:19; ຮຮ 3:12.
5 *ກ* ສພສ 29:23. ຄມພ ຈອງຫອງ, ຄວາມຈອງຫອງ.
*ຂ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
6 *ກ* ອຊຢ 45:9; ຄພ 58:30; ມຊ 7:32–33.
*ຂ* ຄພ 60:4.
7 *ກ* ອຊຢ 40:15, 17; ມຊຢ 4:19; ມຊ 1:10.
9 *ກ* 3 ນຟ 22:10.
10 *ກ* 1 ນຟ 17:46.
11 *ກ* ມມ 5:23; ອທ 4:9.

14 ແທ້ຈິງແລ້ວ, ຖ້າຫາກພຣະອົງກ່າວ
ກັບ [ກ]ແຜ່ນ ດິນ ໂລກ ວ່າ—ຈົ່ງ [ຂ]ກັບ ຄືນ
ໄປ, ເພື່ອ [ຄ]ຕໍ່ມື້ອອກໄປໃຫ້ເປັນຫລາຍຊົ່ວ
ໂມງ—ມັນກໍຈະເປັນໄປ;
15 ແລະ ດ້ວຍ ເຫດ ນີ້, ຕາມ ພຣະ ຄຳ
ຂອງພຣະອົງ ແຜ່ນ ດິນ ໂລກຈຶ່ງ ກັບ ຄືນ
ໄປ, ແລະ ມັນຈຶ່ງປະກົດໃຫ້ມະນຸດເຫັນວ່າ
ດວງຕາເວັນນັ້ນຢູ່ບ່ອນເກົ່າ; ແທ້ຈິງແລ້ວ,
ແລະ ຈົ່ງເບິ່ງ, ມັນເປັນໄປຕາມນັ້ນ ເພາະ
ໂດຍແນ່ນອນ ມັນແມ່ນແຜ່ນດິນໂລກທີ່
ເຄື່ອນໄຫວໄປມາ ແລະ ບໍ່ແມ່ນດວງຕາ
ເວັນ.
16 ແລະ ຈົ່ງເບິ່ງ, ຖ້າຫາກພຣະອົງກ່າວ
ກັບ [ກ]ນ້ຳທີ່ເລິກທີ່ສຸດອີກ ວ່າ—ເຈົ້າ [ຂ]ຈົ່ງ
ແຫ້ງ—ມັນກໍຈະເປັນໄປ.
17 ຈົ່ງເບິ່ງ, ຖ້າຫາກພຣະອົງກ່າວກັບ
ພູເຂົາໜ່ວຍນີ້ວ່າ—ເຈົ້າຈົ່ງສູງຂຶ້ນ, ແລະ
[ກ]ຕົກລົງໃສ່ເມືອງນັ້ນເພື່ອຝັງມັນໄວ້—ຈົ່ງ
ເບິ່ງ ມັນກໍຈະເປັນໄປ.
18 ແລະ ຈົ່ງເບິ່ງ, ຖ້າຫາກຜູ້ໃດ [ກ]ເຊື່ອງ
ຊັບສົມບັດໄວ້ໃນແຜ່ນດິນ, ແລະ ເມື່ອພຣະ
ຜູ້ເປັນເຈົ້າກ່າວວ່າ—ໃຫ້ມັນຖືກ [ຂ]ສາບ
ແຊ່ງຍ້ອນວ່າຄວາມຊົ່ວຮ້າຍຂອງຜູ້ທີ່ເຊື່ອງ
ມັນໄວ້—ຈົ່ງເບິ່ງ, ມັນກໍຈະຖືກສາບແຊ່ງ.
19 ແລະ ຖ້າຫາກພຣະຜູ້ເປັນເຈົ້າກ່າວ
ວ່າ—ເຈົ້າຈົ່ງຖືກສາບແຊ່ງ, ເພື່ອຈະບໍ່ໃຫ້ຜູ້
ໃດພົບເຫັນເຈົ້ານັບແຕ່ເວລານີ້ເປັນຕົ້ນໄປ
ແລະ ຕະຫລອດການ—ຈົ່ງເບິ່ງ, ມັນຈະບໍ່
ມີຜູ້ໃດພົບເຫັນມັນໄດ້ນັບແຕ່ເວລານີ້ເປັນ
ຕົ້ນໄປ ແລະ ຕະຫລອດການ.
20 ແລະ ຈົ່ງເບິ່ງ, ຖ້າຫາກພຣະຜູ້ເປັນ
ເຈົ້າກ່າວກັບມະນຸດວ່າ—ເພາະຄວາມ
ຊົ່ວຮ້າຍຂອງເຈົ້າ, ເຈົ້າຈະຖືກສາບແຊ່ງ
ຕະຫລອດການ—ມັນກໍຈະເປັນໄປ.
21 ແລະ ຖ້າຫາກພຣະຜູ້ເປັນເຈົ້າກ່າວ
ວ່າ—ເພາະຄວາມຊົ່ວຮ້າຍຂອງເຈົ້າ, ເຈົ້າ
ຈະຖືກຕັດອອກຈາກທີ່ປະທັບຂອງເຮົາ—
ພຣະອົງຈະເຮັດໃຫ້ມັນເປັນໄປດັ່ງນັ້ນ.
22 ແລະ ວິບັດແກ່ຜູ້ທີ່ພຣະອົງຈະກ່າວ
ເຊັ່ນນີ້, ເພາະມັນຈະເປັນໄປກັບເຂົາຜູ້ເຮັດ
ຄວາມຊົ່ວຮ້າຍ, ແລະ ເຂົາຈະລອດບໍ່ໄດ້;
ສະນັ້ນ ເພາະເຫດນີ້, ເພື່ອມະນຸດຈະໄດ້
ຮັບຄວາມລອດ ຈຶ່ງມີປະກາດເລື່ອງການ
ກັບໃຈ.
23 ສະນັ້ນ, ຄົນທີ່ກັບໃຈ ແລະ ເຊື່ອຟັງສຸ
ລະສຽງຂອງພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາຍ່ອມເປັນສຸກ; ເພາະ
ຜູ້ຄົນເຫລົ່ານີ້ຄືພວກທີ່ຈະໄດ້ຮັບ [ກ]ຄວາມ
ລອດ.
24 ແລະ ຂໍພຣະເຈົ້າໂປດປະທານໃນ
ຄວາມບໍລິບູນອັນຍິ່ງໃຫຍ່ຂອງພຣະອົງ
ເພື່ອມະນຸດຈະຖືກນຳມາສູ່ການກັບໃຈ
ແລະ ວຽກງານດີ, ເພື່ອພວກເຂົາຈະໄດ້ຖືກ
ນຳກັບຄືນສູ່ [ກ]ພຣະຄຸນເພື່ອພຣະຄຸນ, ຕາມ
ວຽກງານຂອງພວກເຂົາ.
25 ແລະ ຂ້າພະເຈົ້າຢາກໃຫ້ທຸກຄົນໄດ້
ຮັບຄວາມລອດ. ແຕ່ພວກເຮົາໄດ້ອ່ານມາ
ວ່າ ໃນວັນສຸດທ້າຍ ແລະ ຍິ່ງໃຫຍ່ນັ້ນ ຈະມີ
ບາງຄົນທີ່ຖືກຂັບໄລ່ອອກໄປ, ແທ້ຈິງແລ້ວ,
ຈະຖືກປະຖິ້ມຈາກທີ່ປະທັບຂອງພຣະຜູ້
ເປັນເຈົ້າ;
26 ແທ້ ຈິງ ແລ້ວ, ຈະ ຖືກ ສົ່ງ ໄປ ຫາ
ສະພາບແຫ່ງຄວາມທຸກທໍລະມານອັນບໍ່ມີ
ວັນສິ້ນສຸດຕາມຄຳທີ່ມີເວົ້າໄວ້ວ່າ: ຜູ້ທີ່ສ້າງ

14 ກ ຢຊ 10:12–14.
ຂ ອຊຢ 38:7–8.
ຄ 2 ກສ 20:8–11.
16 ກ ມທ 8:27.
ຂ ອຊຢ 44:27; 51:10.
17 ກ 3 ນຟ 8:10.
18 ກ ມມ 1:18;
ອທ 14:1.
ຂ ຣລມ 13:17.
23 ກ ຄມພ ລອດ, ຄວາມລອດ.
24 ກ ຄມພ ພຣະຄຸນ.

ຄວາມດີຈະມີ ᵃຊີວິດອັນເປັນນິດ; ແລະ ຜູ້ທີ່ສ້າງຄວາມຊົ່ວຈະໄດ້ຮັບ ᵇຄວາມອັບປະໂຫຍດອັນເປັນນິດ. ແລະ ເປັນໄປດັ່ງນັ້ນ. ອາແມນ.

---

ຄຳທຳນາຍຂອງຊາມູເອນຄົນເລມັນທີ່ໃຫ້ໄວ້ກັບຊາວນີໄຟ.

*ມີຢູ່ໃນບົດທີ 13 ຈົນເຖິງບົດທີ 15.*

## ບົດທີ 13

*ຊາມູເອນຄົນເລມັນທຳນາຍເຖິງການທຳລາຍຂອງຊາວນີໄຟຖ້າຫາກພວກເຂົາບໍ່ກັບໃຈ—ພວກເຂົາ ແລະ ຂອງມີຄ່າຂອງພວກເຂົາຖືກສາບແຊ່ງ—ພວກເຂົາປະຕິເສດ ແລະ ແກວ່ງກ້ອນຫີນໃສ່ສາດສະດາ, ຖືກຫຸ້ມລ້ອມໄວ້ດ້ວຍວິນຍານຮ້າຍ, ແລະ ສະແຫວງຫາຄວາມສຸກໃນການເຮັດຄວາມຊົ່ວຮ້າຍ. ປະມານ 6 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີທີແປດສິບຫົກ, ຊາວນີໄຟຍັງຢູ່ໃນຄວາມຊົ່ວຮ້າຍຢູ່, ແທ້ຈິງແລ້ວ, ຍັງຢູ່ໃນຄວາມຊົ່ວຮ້າຍອັນໃຫຍ່ຫລວງ, ໃນຂະນະທີ່ ᵃຊາວເລມັນໄດ້ປະຕິບັດຢ່າງເຄັ່ງຄັດໃນການຮັກສາພຣະບັນຍັດຂອງພຣະເຈົ້າຕາມກົດຂອງໂມເຊ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີນີ້ມີຊາວເລມັນຄົນໜຶ່ງຊື່ວ່າ ຊາມູເອນ, ເຂົ້າມາໃນແຜ່ນດິນເຊຣາເຮັມລາ ແລະ ເລີ່ມສັ່ງສອນຜູ້ຄົນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ສັ່ງສອນກ່ຽວກັບການກັບໃຈໃຫ້ແກ່ຜູ້ຄົນຢູ່ຫລາຍມື້, ແລະ ພວກເຂົາໄດ້ຂັບໄລ່ເພິ່ນອອກໄປ, ແລະ ເພິ່ນກຳລັງຈະກັບໄປຫາແຜ່ນດິນຂອງເພິ່ນເອງ.

3 ແຕ່ຈົ່ງເບິ່ງ, ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງເພິ່ນ, ວ່າເພິ່ນຄວນກັບຄືນໄປອີກ ແລະ ທຳນາຍແກ່ຜູ້ຄົນເຖິງເລື່ອງອັນໃດກໍຕາມທີ່ຈະເຂົ້າມາໃນ ᵃໃຈຂອງເພິ່ນ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ຍອມໃຫ້ເພິ່ນເຂົ້າເມືອງ; ສະນັ້ນເພິ່ນຈຶ່ງອອກໄປ ແລະ ຂຶ້ນເທິງກຳແພງເມືອງນັ້ນ ແລະ ເດ່ມືອອກໄປ ແລະ ຮ້ອງອອກມາດ້ວຍສຽງອັນດັງ ແລະ ທຳນາຍແກ່ຜູ້ຄົນເຖິງເລື່ອງທີ່ພຣະຜູ້ເປັນເຈົ້າໃສ່ໄວ້ໃນໃຈຂອງເພິ່ນ.

5 ແລະ ເພິ່ນໄດ້ກ່າວກັບພວກເຂົາວ່າ: ຈົ່ງເບິ່ງຂ້າພະເຈົ້າຊາມູເອນ ເປັນຊາວເລມັນ, ຂໍເວົ້າເຖິງພຣະຄຳຂອງພຣະຜູ້ເປັນເຈົ້າ ຊຶ່ງພຣະອົງໄດ້ໃສ່ໄວ້ໃນໃຈຂອງຂ້າພະເຈົ້າ; ແລະ ຈົ່ງເບິ່ງ ພຣະອົງໄດ້ໃສ່ມັນໄວ້ໃນໃຈຂອງຂ້າພະເຈົ້າ ເພື່ອໃຫ້ກ່າວກັບຜູ້ຄົນພວກນີ້ວ່າ ᵃດາບແຫ່ງຄວາມຍຸດຕິທຳກຳລັງຫ້ອຍຢູ່ເທິງຫົວຂອງຜູ້ຄົນພວກນີ້; ແລະ ກ່ອນສີ່ຮ້ອຍປີຈະຜ່ານໄປ, ດາບແຫ່ງຄວາມຍຸດຕິທຳຈະຕົກລົງມາໃສ່ຜູ້ຄົນພວກນີ້.

6 ແທ້ຈິງແລ້ວ, ᵃຄວາມພິນາດຢ່າງໃຫຍ່ຫລວງໄດ້ຄອຍຖ້າຜູ້ຄົນພວກນີ້ຢູ່, ແລະມັນຈະມາຫາຜູ້ຄົນພວກນີ້ຢ່າງແນ່ນອນແລະ ຈະບໍ່ມີສິ່ງໃດຈະຊ່ວຍໃຫ້ຜູ້ຄົນພວກນີ້ລອດໄດ້ນອກຈາກການກັບໃຈ ແລະ

---

26 *ກ* ມທ 25:46;
ຢຮ 5:28–29;
ຣມ 6:13.
*ຂ* ຄມພ ອັບປະໂຫຍດ,
ຄວາມອັບປະໂຫຍດ.
**13** 1 *ກ* ຮລມ 15:4–5.
3 *ກ* ຄພ 100:5.
5 *ກ* ແອວ 60:29;
3 ນຟ 2:19.
6 *ກ* ແອວ 45:10–14;
ຮລມ 15:17.

ສັດທາໃນອົງພຣະເຢຊູຄຣິດເຈົ້າ, ຜູ້ຈະສະ
ເດັດມາໃນໂລກຢ່າງແນ່ນອນ, ແລະ ຈະ
ທົນທຸກທໍລະມານຫລາຍຢ່າງ ແລະ ຈະຖືກ
ຂ້າເພື່ອຜູ້ຄົນຂອງພຣະອົງ.
7 ແລະ ຈົ່ງເບິ່ງ, [ກ]ທູດຂອງພຣະຜູ້ເປັນ
ເຈົ້າໄດ້ປະກາດເລື່ອງນີ້ແກ່ຂ້າພະເຈົ້າ,
ແລະ ເພິ່ນໄດ້ນຳຂ່າວ [ຂ]ອັນໜ້າຊື່ນຊົມມາ
ສູ່ຈິດວິນຍານຂອງຂ້າພະເຈົ້າ. ແລະ ຈົ່ງ
ເບິ່ງ, ຂ້າພະເຈົ້າຖືກສົ່ງມາຫາພວກທ່ານ
ແລະ ປະກາດແກ່ພວກທ່ານນຳອີກ, ເພື່ອ
ພວກທ່ານຈະໄດ້ຮັບຂ່າວອັນໜ້າຊື່ນຊົມ
ນີ້; ແຕ່ຈົ່ງເບິ່ງ ພວກທ່ານບໍ່ຍອມຮັບຂ້າພະ
ເຈົ້າເລີຍ.
8 ສະນັ້ນ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້:
ເພາະຄວາມແຂງກະດ້າງຂອງໃຈຂອງຜູ້
ຄົນຊາວນີໄຟ, ຖ້າຫາກພວກເຂົາບໍ່ກັບໃຈ
ເຮົາຈະເອົາພຣະຄຳຂອງເຮົາໄປຈາກພວກ
ເຂົາ, ແລະ ເຮົາຈະ [ກ]ຖອນພຣະວິນຍານ
ຂອງເຮົາອອກຈາກພວກເຂົາ, ແລະ ເຮົາ
ຈະບໍ່ອົດທົນກັບພວກເຂົາຕໍ່ໄປອີກ, ແລະ
ເຮົາຈະຫັນໃຈຂອງພີ່ນ້ອງຂອງພວກເຂົາ
ມາຕໍ່ຕ້ານພວກເຂົາ.
9 ແລະ ກ່ອນ [ກ]ສີ່ຮ້ອຍປີຈະຜ່ານໄປ ເຮົາ
ຈະເຮັດໃຫ້ພວກເຂົາຖືກລົງໂທດ; ແທ້ຈິງ
ແລ້ວ, ເຮົາຈະມາຢ້ຽມຢາມພວກເຂົາດ້ວຍ
ດາບ ແລະ ດ້ວຍຄວາມອຶດຢາກ ແລະ
ດ້ວຍພະຍາດໂລຄາ.
10 ແທ້ຈິງແລ້ວ, ເຮົາຈະມາຢ້ຽມຢາມ
ພວກເຂົາໃນພຣະພິໂລດອັນຮ້າຍແຮງ
ຂອງເຮົາ, ແລະ ຄົນລຸ້ນ [ກ]ທີສີ່ ຜູ້ທີ່ເປັນສັດ
ຕູຂອງພວກເຈົ້າຈະມີຊີວິດຢູ່, ເພື່ອພວກ
ເຂົາຈະໄດ້ເຫັນຄວາມພິນາດທັງໝົດຂອງ
ພວກເຈົ້າ; ແລະ ສິ່ງນີ້ຈະເກີດຂຶ້ນຢ່າງແນ່
ນອນຖ້າຫາກພວກເຈົ້າບໍ່ກັບໃຈ, ພຣະຜູ້
ເປັນເຈົ້າໄດ້ກ່າວ; ແລະ ຄົນລຸ້ນທີສີ່ຈະເຫັນ
ຄວາມພິນາດຂອງພວກເຈົ້າ.
11 ແຕ່ຖ້າຫາກພວກເຈົ້າກັບໃຈ ແລະ
[ກ]ຫັນມາຫາພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າ ເຮົາຈະເອົາພຣະພິໂລດ
ຂອງເຮົາໄປ, ພຣະຜູ້ເປັນເຈົ້າໄດ້ກ່າວ; ແທ້
ຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ຜູ້
ທີ່ກັບໃຈ ແລະ ຫັນມາຫາເຮົາຍ່ອມເປັນ
ສຸກ, ແຕ່ວິບັດແກ່ຜູ້ທີ່ບໍ່ກັບໃຈ.
12 ແທ້ຈິງແລ້ວ, [ກ]ວິບັດແກ່ເມືອງເຊຣາ
ເຮັມລາທີ່ຍິ່ງໃຫຍ່ນີ້; ເພາະຈົ່ງເບິ່ງ, ເພາະ
ຄົນຊອບທຳມັນຈຶ່ງຖືກຍົກເວັ້ນ; ແທ້ຈິງ
ແລ້ວ, ວິບັດແກ່ເມືອງຍິ່ງໃຫຍ່ນີ້, ພຣະຜູ້
ເປັນເຈົ້າໄດ້ກ່າວ, ເພາະເຮົາເຫັນວ່າມີຢູ່
ຢ່າງຫລວງຫລາຍ, ແທ້ຈິງແລ້ວ, ຄົນສ່ວນ
ຫລາຍຂອງເມືອງຍິ່ງໃຫຍ່ນີ້ທີ່ຈະເຮັດໃຈ
ແຂງກະດ້າງຕໍ່ເຮົາ, ພຣະຜູ້ເປັນເຈົ້າໄດ້
ກ່າວ.
13 ແຕ່ຄົນທີ່ຈະກັບໃຈຍ່ອມເປັນສຸກ,
ເປັນຍ້ອນພວກເຂົາ ເຮົາຈຶ່ງຈະຍົກເວັ້ນ.
ແຕ່ຈົ່ງເບິ່ງ, ຖ້າຫາກບໍ່ແມ່ນເພາະຄົນຊອບ
ທຳທີ່ຢູ່ໃນເມືອງຍິ່ງໃຫຍ່ນີ້, ຈົ່ງເບິ່ງ, ເຮົາ
ຈະໃຫ້ [ກ]ໄຟລົງມາຈາກສະຫວັນ ແລະ ທຳ
ລາຍມັນເສຍ.
14 ແຕ່ຈົ່ງເບິ່ງ, ເພື່ອເຫັນແກ່ຄົນຊອບ
ທຳ ມັນຈຶ່ງໄດ້ຮັບການຍົກເວັ້ນ. ແຕ່ຈົ່ງເບິ່ງ,
ພຣະຜູ້ເປັນເຈົ້າໄດ້ກ່າວ, ວ່າເວລາຈະມາ
ເຖິງ ເມື່ອໃດພວກເຈົ້າຈະຂັບໄລ່ຄົນຊອບ
ທຳອອກຈາກບັນດາພວກເຈົ້າ, ເມື່ອນັ້ນ
ພວກເຈົ້າຈະສຸກເພື່ອຄວາມພິນາດ; ແທ້

7 *ກ* ແອວ 13:26.
*ຂ* ອຊຢ 52:7.
8 *ກ* ຮລມ 6:35.
9 *ກ* ແອວ 45:10–12.
10 *ກ* 1 ນຟ 12:12;
2 ນຟ 26:9;
3 ນຟ 27:32.
11 *ກ* 3 ນຟ 10:5–7.
12 *ກ* 3 ນຟ 8:8, 24; 9:3.
13 *ກ* ປຖກ 19:24;
2 ກສ 1:9–16;
3 ນຟ 9:11.

ຈິງແລ້ວ, ວິບັດແກ່ເມືອງຍິ່ງໃຫຍ່ນີ້ ເພາະ
ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຊຶ່ງ
ມີຢູ່ໃນນັ້ນ.
15 ແທ້ ຈິງ ແລ້ວ, ແລະ ວິບັດ ແກ່ ເມືອງ
ກີເດໂອນ, ເພາະ ຄວາມ ຊົ່ວ ຮ້າຍ ແລະ
ຄວາມໜ້າກຽດຊັງຊຶ່ງມີຢູ່ໃນນັ້ນ.
16 ແທ້ຈິງແລ້ວ, ແລະ ວິບັດແກ່ເມືອງທັງ
ໝົດ ຊຶ່ງຢູ່ໃນແຜ່ນດິນໂດຍຮອບ, ທີ່ຊາວ
ນີໄຟເປັນເຈົ້າຂອງ ເພາະຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງທີ່ມີຢູ່ໃນນັ້ນ.
17 ແລະ ຈົ່ງເບິ່ງ, ແຜ່ນດິນຈະຖືກ [ກ]ສາບ
ແຊ່ງ, ຈອມໂຍທາໄດ້ກ່າວ, ເພາະເຫັນແກ່
ຜູ້ຄົນທີ່ຢູ່ເທິງແຜ່ນດິນ, ແທ້ຈິງແລ້ວ, ເພາະ
ຄວາມຊົ່ວຮ້າຍຂອງພວກເຂົາ ແລະ ຄວາມ
ໜ້າກຽດຊັງຂອງພວກເຂົາ.
18 ແລະ ເຫດການຈະບັງເກີດຂຶ້ນ, ຈອມ
ໂຍທາໄດ້ກ່າວ, ແທ້ຈິງແລ້ວ, ພຣະເຈົ້າອົງ
ຍິ່ງໃຫຍ່ ແລະ ແທ້ຈິງຂອງພວກເຮົາໄດ້
ກ່າວວ່າ ຜູ້ທີ່ [ກ]ເຊື່ອງຊັບສົມບັດໄວ້ໃນແຜ່ນ
ດິນຈະຫາມັນບໍ່ພົບອີກເລີຍ ເພາະການ
ສາບແຊ່ງອັນໃຫຍ່ຫລວງທີ່ມີກັບແຜ່ນດິນ,
ຍົກເວັ້ນແຕ່ຄົນຊອບທຳຜູ້ທີ່ເຊື່ອງຊັບສິນ
ຂອງພວກເຂົາໄວ້ກັບພຣະຜູ້ເປັນເຈົ້າເທົ່າ
ນັ້ນ.
19 ເພາະ ເຮົາ ຈະ, ພຣະ ຜູ້ ເປັນ ເຈົ້າ ໄດ້
ກ່າວ, ວ່າເຮົາຢາກໃຫ້ພວກເຂົາເຊື່ອງຊັບ
ສົມບັດຂອງພວກເຂົາໄວ້ກັບເຮົາ; ແລະ
ຄົນທີ່ບໍ່ເຊື່ອງຊັບສົມບັດຂອງພວກເຂົາໄວ້
ກັບເຮົາຈະຖືກສາບແຊ່ງ ເພາະບໍ່ມີຜູ້ໃດ
ທີ່ຈະເຊື່ອງຊັບສົມບັດຂອງຕົນໄວ້ກັບເຮົາ
ນອກຈາກຄົນທີ່ຊອບທຳເທົ່ານັ້ນ; ແລະ
ຄົນທີ່ບໍ່ໄດ້ເຊື່ອງຊັບສົມບັດຂອງເຂົາໄວ້
ກັບເຮົາຈະຖືກສາບແຊ່ງ ແລະ ຊັບສົມບັດ
ກໍຄືກັນ, ແລະ ບໍ່ມີຜູ້ໃດຈະໄຖ່ມັນຄືນມາ
ເພາະຄຳສາບແຊ່ງທີ່ມີກັບແຜ່ນດິນ.
20 ແລະ ມື້ນັ້ນຈະມາເຖິງຄື ພວກເຂົາຈະ
ເຊື່ອງຊັບສົມບັດຂອງພວກເຂົາໄວ້ ເພາະ
ພວກເຂົາມີແຕ່ໝົກໝຸ້ນຢູ່ກັບຂອງມີຄ່າ;
ແລະ ເພາະພວກເຂົາມີແຕ່ໝົກໝຸ້ນຢູ່ກັບ
ຂອງມີຄ່າຂອງພວກເຂົາ, ແລະ ຈະເຊື່ອງ
ຊັບສົມບັດຂອງພວກເຂົາໄວ້ໃນເວລາທີ່
ພວກເຂົາຫລົບໜີໄປຈາກສັດຕູຂອງພວກ
ເຂົາ; ເພາະພວກເຂົາຈະບໍ່ໄດ້ເຊື່ອງຊັບສົມ
ບັດຂອງພວກເຂົາໄວ້ກັບເຮົາ, ພວກເຂົາ
ຈະຖືກສາບແຊ່ງ ແລະ ຊັບສົມບັດຂອງ
ພວກເຂົາກໍຄືກັນ, ແລະ ໃນມື້ນັ້ນ ພວກເຂົາ
ຈະຖືກລົງໂທດ, ພຣະຜູ້ເປັນເຈົ້າໄດ້ກ່າວ.
21 ຈົ່ງເບິ່ງ ພວກທ່ານຜູ້ເປັນຜູ້ຄົນຂອງ
ເມືອງຍິ່ງໃຫຍ່ນີ້, ແລະ ຈົ່ງ [ກ]ເຊື່ອຟັງຄຳ
ເວົ້າຂອງຂ້າພະເຈົ້າເຖີດ; ແທ້ຈິງແລ້ວ,
ຈົ່ງເຊື່ອຟັງພຣະຄຳຊຶ່ງພຣະຜູ້ເປັນເຈົ້າໄດ້
ກ່າວໄວ້; ເພາະຈົ່ງເບິ່ງ, ພຣະອົງໄດ້ກ່າວ
ວ່າ ພວກທ່ານຈະຖືກສາບແຊ່ງ ເພາະຂອງ
ມີຄ່າຂອງພວກທ່ານ, ແລະ ຂອງມີຄ່າຂອງ
ພວກທ່ານຈະຖືກສາບແຊ່ງນຳອີກ ເພາະ
ພວກທ່ານໝົກໝຸ້ນຢູ່ກັບມັນ, ແລະ ບໍ່ເຊື່ອ
ຟັງພຣະຄຳຂອງພຣະອົງຜູ້ປະທານມັນໃຫ້
ແກ່ພວກທ່ານ.
22 ພວກ ທ່ານບໍ່ ຈື່ ຈຳ ພຣະ ຜູ້ ເປັນ ເຈົ້າ
ອົງເປັນພຣະເຈົ້າຂອງພວກທ່ານໃນສິ່ງທີ່
ພຣະອົງປະທານໃຫ້ແກ່ພວກທ່ານ, ແຕ່
ພວກທ່ານຈື່ຈຳ [ກ]ຂອງມີຄ່າຂອງພວກທ່ານ
ຢູ່ຕະຫລອດເວລາ ແລະ ບໍ່ຖວາຍຄວາມ
ຂອບພຣະໄທແດ່ພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກທ່ານສຳລັບສິ່ງເຫລົ່າ
ນັ້ນ; ແທ້ຈິງແລ້ວ, ໃຈຂອງພວກທ່ານບໍ່ໄດ້

17 *ກ* ຮລມ 12:18.
18 *ກ* ມມ 1:18;
ອທ 14:1.
21 *ກ* ຄນພ ເຊື່ອຟັງ,
ການເຊື່ອຟັງ, ຟັງຄວາມ.
22 *ກ* ລກ 12:34.
ຄນພ ຄວາມເປັນຢູ່ທາງ
ໂລກ;
ຮັ່ງມີ, ຄວາມຮັ່ງມີ.

ອອກ ມາ ຫາ ພຣະ ຜູ້ ເປັນ ເຈົ້າ, ແຕ່ ມັນ ໄດ້
ພອງຂຶ້ນດ້ວຍ [ຂ]ຄວາມ ທະນົງຕົວອັນໃຫຍ່
ຫລວງ, ຈົນ ເຖິງການອວດອ້າງ ແລະ ຈົນ
ເຖິງການທະເຍີທະຍານ, [ຄ]ການອິດສາບັງ
ບຽດ, ການຜິດຖຽງກັນ, ການມີເຈດຕະນາ
ຮ້າຍ, ການກົດຂີ່ຂົ່ມເຫັງ, ແລະ ການຄາດ
ຕະກຳ, ແລະ ການ ເຮັດ ຄວາມຊົ່ວ ຮ້າຍ
ນາໆປະການ.
23 ດ້ວຍ ເຫດ ນີ້ ອົງພຣະ ຜູ້ເປັນ ເຈົ້າ ຈຶ່ງ
ໃຫ້ການສາບແຊ່ງມາສູ່ແຜ່ນດິນ ແລະ ມາ
ສູ່ຂອງມີຄ່າຂອງພວກທ່ານນຳອີກ, ແລະ ນີ້
ເພາະຄວາມຊົ່ວຮ້າຍຂອງພວກທ່ານ.
24 ແທ້ ຈິງ ແລ້ວ, ວິບັດ ແກ່ຜູ້ຄົນ ພວກ
ນີ້, ເພາະເວລານີ້ຊຶ່ງມາເຖິງແລ້ວ, ທີ່ພວກ
ທ່ານ ໄດ້ [ກ]ຂັບ ໄລ່ສາດສະ ດາອອກໄປ,
ແລະ ເຍາະເຍີ້ຍພວກເພິ່ນ, ແລະ ແກວ່ງ
ກ້ອນຫີນໃສ່ພວກເພິ່ນ, ແລະ ໄລ່ຂ້າພວກ
ເພິ່ນ, ແລະ ເຮັດຄວາມຊົ່ວຮ້າຍ ນາໆປະ
ການຕໍ່ພວກເພິ່ນ ຄືກັນກັບຜູ້ຄົນໃນສະໄໝ
ບູຮານເຮັດໄປນັ້ນ.
25 ແລະ ບັດນີ້ເວລາພວກທ່ານເວົ້າອອກ
ມາ, ພວກທ່ານເວົ້າວ່າ: ຖ້າຫາກພວກເຮົາ
ມີຊີວິດຢູ່ ໃນ ສະໄໝຂອງ [ກ]ບັນ ພະບຸລຸດ
ຂອງ ພວກ ເຮົາ, ພວກ ເຮົາຈະບໍ່ຂ້າສາດ
ສະດາ; ພວກເຮົາຈະບໍ່ແກວ່ງກ້ອນຫີນໃສ່
ພວກ ເພິ່ນ, ແລະ ຂັບ ໄລ່ພວກ ເພິ່ນ ອອກ
ໄປ.
26 ຈົ່ງເບິ່ງ ພວກທ່ານຍິ່ງຊົ່ວຮ້າຍຫລາຍ
ກວ່າພວກ ເຂົາ ອີກ ຊ້ຳ; ເພາະ ຕາບ ໃດ ທີ່
ພຣະ ຜູ້ ເປັນ ເຈົ້າ ຊົງພຣະຊົນຢູ່, ຖ້າຫາກ
[ກ]ສາດ ສະ ດາ ຄົນ ໃດ ມາ ໃນ ບັນ ດາ ພວກ
ທ່ານ ແລະ ປະກາດພຣະຄຳຂອງພຣະຜູ້
ເປັນ ເຈົ້າແກ່ພວກທ່ານ, ຊຶ່ງ ໃຫ້ ຖ້ອຍຄຳ
ເຖິງບາບ ແລະ ຄວາມຊົ່ວຮ້າຍຂອງພວກ
ທ່ານ, ແລ້ວພວກທ່ານກໍ [ຂ]ໂມໂຫຮ້າຍຂຶ້ນ,
ແລະ ຂັບ ໄລ່ ເພິ່ນ ອອກ ໄປ, ແລະ ຊອກ
ຫາທຸກວິທີ ທາງ ທີ່ ຈະ ທຳ ລາຍ ເພິ່ນ; ແທ້
ຈິງແລ້ວ, ພວກທ່ານຈະເວົ້າວ່າ ເພິ່ນເປັນ
[ຄ]ສາດສະດາປອມ, ແລະ ວ່າເພິ່ນເປັນຄົນ
ບາບ, ແລະ ເປັນຂອງມານ, ເພາະເພິ່ນໄດ້
[ງ]ໃຫ້ ຖ້ອຍ ຄຳ ວ່າ ການ ກະ ທຳ ຂອງ ພວກ
ທ່ານຊົ່ວ.
27 ແຕ່ ຈົ່ງ ເບິ່ງ, ຖ້າ ຫາກ ມີ ຄົນ ໜຶ່ງ ເຂົ້າ
ມາ ໃນ ບັນ ດາພວກທ່ານ ແລະ ເວົ້າວ່າ:
ເຮັດແນວນີ້; ແລະ ຈະບໍ່ມີຄວາມຊົ່ວຮ້າຍ;
ເຮັດ ແນວ ນັ້ນ ແລ້ວພວກທ່ານຈະບໍ່ຕ້ອງ
ທົນທຸກ; ແທ້ຈິງແລ້ວ, ລາວຈະເວົ້າວ່າ: ຈົ່ງ
ດຳເນີນໄປຕາມຄວາມຈອງຫອງຂອງໃຈ
ຂອງພວກທ່ານເອງ; ແທ້ຈິງແລ້ວ, ຈົ່ງດຳ
ເນີນໄປຕາມຄວາມຈອງຫອງຂອງຕາຂອງ
ພວກທ່ານເອງ, ແລະ ຈົ່ງເຮັດສິ່ງໃດກໍຕາມ
ຕາມຄວາມປາດຖະໜາຂອງໃຈຂອງພວກ
ທ່ານ—ແລະ ຖ້າຫາກມີຄົນໃດເຂົ້າມາໃນ
ບັນດາພວກທ່ານ ແລະ ເວົ້າແບບນີ້ ພວກ
ທ່ານກໍຈະຮັບເອົາລາວ ແລະ ເວົ້າວ່າລາວ
ເປັນ [ກ]ສາດສະດາ.
28 ແທ້ຈິງແລ້ວ, ພວກທ່ານຈະຍົກລາວ
ຂຶ້ນ, ແລະ ພວກທ່ານຈະມອບເຂົ້າຂອງ
ຂອງພວກທ່ານ ໃຫ້ລາວ; ພວກທ່ານຈະ
ມອບ ຄຳ ຂອງພວກທ່ານ ໃຫ້ລາວ, ແລະ
ເງິນຂອງພວກທ່ານໃຫ້ລາວ, ແລະ ພວກ
ທ່ານຈະຕົກແຕ່ງລາວດ້ວຍເສື້ອຜ້າທີ່ມີລາ

22 *ຂ* ຄມພ ຈອງຫອງ, ຄວາມຈອງຫອງ.
*ຄ* ຄມພ ອິດສາ.
24 *ກ* 2 ຂຄ 36:15–16; 1 ນຟ 1:20.
25 *ກ* ກຈກ 7:51.
26 *ກ* 2 ຂຄ 18:7; ລກ 16:31.
*ຂ* ອຊຢ 30:9–10.
*ຄ* ມທ 13:57.
*ງ* ຄລຕ 4:16.
27 *ກ* ມກ 2:11. ຄມພ ການຫລອກລວງ ຂອງປະໂລຫິດ.

ຄາແພງ ເພາະລາວໄດ້ [ກ]ຍ້ອງຍໍພວກທ່ານ,
ແລະ ຍ້ອນວ່າ ລາວ ເວົ້າໃນທາງທີ່ພວກ
ທ່ານພໍໃຈ, ເວລານັ້ນພວກທ່ານຈະບໍ່ພົບ
ຄວາມຜິດໃນລາວ.
29 ໂອ້ ພວກທ່ານຜູ້ຄົນລຸ້ນທີ່ຊົ່ວ ແລະ
ເສຍຄົນເອີຍ; ພວກທ່ານເປັນຄົນແຂງກະ
ດ້າງ ແລະ ພວກທ່ານເປັນຄົນແຂງຄໍ, ພວກ
ທ່ານຄິດວ່າພຣະຜູ້ເປັນເຈົ້າຈະອົດທົນກັບ
ພວກທ່ານໄດ້ດົນປານໃດ? ແທ້ຈິງແລ້ວ,
ພວກທ່ານຈະປ່ອຍຕົວໃຫ້ [ກ]ຄົນໂງ່ ແລະ
[ຂ]ຕາບອດນຳພາພວກທ່ານໄປດົນປານ
ໃດ? ແທ້ຈິງແລ້ວ, ພວກທ່ານຈະ [ຄ]ເລືອກ
ເອົາຄວາມມືດແທນ [ງ]ຄວາມສະຫວ່າງໄປ
ດົນປານໃດ?
30 ແທ້ຈິງແລ້ວ, ຈົ່ງເບິ່ງ, ພຣະພິໂລດ
ຂອງພຣະຜູ້ເປັນເຈົ້າໄດ້ເກີດກັບພວກທ່ານ
ແລ້ວ; ຈົ່ງເບິ່ງ, ພຣະອົງໄດ້ສາບແຊ່ງແຜ່ນ
ດິນ ເພາະຄວາມຊົ່ວຮ້າຍຂອງພວກທ່ານ.
31 ແລະ ຈົ່ງເບິ່ງ, ເວລາມາເຖິງແລ້ວທີ່
ພຣະອົງຈະສາບແຊ່ງຂອງມີຄ່າຂອງພວກ
ທ່ານ, ເພື່ອໃຫ້ມັນ [ກ]ມື່ນຫລຸດໄປ, ເພື່ອ
ພວກທ່ານຈະຍຶດມັນໄວ້ບໍ່ໄດ້; ແລະ ໃນມື້
ແຫ່ງຄວາມຍາກຈົນຂອງພວກທ່ານ, ພວກ
ທ່ານຈະບໍ່ສາມາດຮັກສາມັນໄວ້ໄດ້.
32 ແລະ ໃນມື້ແຫ່ງຄວາມຍາກຈົນຂອງ
ພວກທ່ານ, ພວກທ່ານຈະຮ້ອງຫາພຣະ
ຜູ້ເປັນເຈົ້າ; ແລະ ພວກທ່ານຈະຮ້ອງໄປ
ໂດຍບໍ່ມີປະໂຫຍດ, ເພາະຄວາມເປົ່າປ່ຽວ
ໄດ້ມາຫາພວກທ່ານແລ້ວ, ແລະ ຄວາມ
ພິນາດຂອງພວກທ່ານນັ້ນກໍຈະມີຂຶ້ນຢ່າງ
ແນ່ນອນ; ແລະ ໃນມື້ນັ້ນພວກທ່ານຈະ
ຮ້ອງໄຫ້ ແລະ ຄວນຄາງ, ຈອມໂຍທາໄດ້
ກ່າວ. ເວລານັ້ນພວກທ່ານຈະຄວນຄາງ
ແລະ ເວົ້າວ່າ:
33 ໂອ້ [ກ]ຖ້າຫາກພວກເຮົາໄດ້ກັບໃຈ,
ແລະ ບໍ່ໄດ້ຂ້າສາດສະດາ, ແລະ ບໍ່ໄດ້
[ຂ]ແກວ່ງກ້ອນຫີນໃສ່ພວກເພິ່ນ, ແລະ ບໍ່ໄດ້
ຂັບໄລ່ພວກເພິ່ນອອກໄປ. ແທ້ຈິງແລ້ວ,
ໃນມື້ນັ້ນ ພວກທ່ານຈະກ່າວວ່າ: ໂອ້ ຖ້າ
ຫາກພວກເຮົາລະນຶກເຖິງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຮົາໃນມື້ທີ່
ພຣະອົງປະທານຂອງມີຄ່າໃຫ້ແກ່ພວກ
ເຮົາ, ມັນກໍຄົງຈະບໍ່ມື່ນຫລຸດໄປຈົນພວກ
ເຮົາຕ້ອງສູນເສຍມັນ; ເພາະຈົ່ງເບິ່ງ, ຂອງ
ມີຄ່າຂອງພວກເຮົາໄປຈາກພວກເຮົາແລ້ວ.
34 ຈົ່ງເບິ່ງ, ພວກເຮົາວາງເຄື່ອງມືໄວ້
ບ່ອນນີ້ ແລະ ໃນມື້ຕໍ່ມາ ມັນໄດ້ຫາຍໄປ;
ແລະ ຈົ່ງເບິ່ງ, ດາບຂອງພວກເຮົາກໍຫາຍ
ໄປໃນມື້ທີ່ພວກເຮົາຊອກຫາມັນເພື່ອການ
ສູ້ຮົບ.
35 ແທ້ຈິງແລ້ວ, ພວກເຮົາໄດ້ເຊື່ອງຊັບ
ສົມບັດຂອງພວກເຮົາໄວ້ ແລະ ມັນໄດ້ມື່ນ
ຫລຸດໄປຈາກພວກເຮົາ ເພາະຄວາມສາບ
ແຊ່ງທີ່ມີກັບແຜ່ນດິນ.
36 ໂອ້ ຖ້າຫາກພວກເຮົາໄດ້ກັບໃຈໃນ
ມື້ທີ່ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງ
ພວກເຮົາ; ເພາະຈົ່ງເບິ່ງ ແຜ່ນດິນໄດ້ຖືກ
ສາບແຊ່ງແລ້ວ, ແລະ ທຸກສິ່ງທຸກຢ່າງກໍມື່ນ
ຫລຸດໄປ, ແລະ ພວກເຮົາບໍ່ສາມາດຈະຍຶດ
ຖືມັນໄວ້ເລີຍ.
37 ຈົ່ງເບິ່ງ, ພວກເຮົາຖືກປິດລ້ອມໄວ້
ດ້ວຍວິນຍານຮ້າຍ, ແທ້ຈິງແລ້ວ, ພວກ
ເຮົາຖືກປິດລ້ອມໄວ້ດ້ວຍບໍລິວານຂອງຜູ້
ທີ່ພະຍາຍາມຈະທຳລາຍຈິດວິນຍານຂອງ
ພວກເຮົາ. ຈົ່ງເບິ່ງ, ຄວາມຊົ່ວຮ້າຍຂອງ
ພວກເຮົານັ້ນໃຫຍ່ຫລວງທີ່ສຸດ. ໂອ້ ພຣະຜູ້

28 ກ 2 ຕມທ 4:3–4.
29 ກ 2 ນຟ 28:9.
ຂ ມທ 15:14.
ຄ ຢຮ 3:19.
ງ ໂຢບ 24:13.
31 ກ ມມ 1:17–18.
33 ກ ມມ 2:10–15.
ຂ ມທ 23:37.

ເປັນເຈົ້າ, ພຣະອົງຈະບໍ່ເອົາພຣະພິໂລດ
ຂອງພຣະອົງໄປຈາກພວກຂ້ານ້ອຍແດ່ບໍ?
ແລະ ນີ້ຈະເປັນຄຳເວົ້າຂອງພວກທ່ານໃນ
ມື້ນັ້ນ.
38 ແຕ່ ຈົ່ງ ເບິ່ງ, [ກ]ວັນ ເວລາ ແຫ່ງ ການ
ທົດລອງຂອງພວກທ່ານໄດ້ຜ່ານໄປແລ້ວ;
ພວກທ່ານໄດ້ [ຂ]ເລື່ອນວັນແຫ່ງຄວາມລອດ
ຂອງ ພວກທ່ານ ຈົນ ວ່າ ມັນ ສາຍ ເກີນ ໄປ
ຢ່າງ ເປັນ ນິດ, ແລະ ຄວາມ ພິນາດ ຂອງ
ພວກທ່ານກໍແນ່ນອນແລ້ວ; ແທ້ຈິງແລ້ວ,
ເພາະ ຕະຫລອດຊີວິດຂອງພວກທ່ານ,
ພວກທ່ານມີແຕ່ສະແຫວງຫາສິ່ງທີ່ພວກ
ທ່ານບໍ່ສາມາດຍຶດຖືມັນໄວ້; ແລະ ພວກ
ທ່ານ ສະແຫວງຫາ [ຄ]ຄວາມ ສຸກ ໃນ ການ
ສ້າງຄວາມຊົ່ວຮ້າຍ, ຊຶ່ງສິ່ງເຫລົ່ານີ້ກົງກັນ
ຂ້າມກັບທຳມະຊາດຂອງຄວາມຊອບທຳ
ຊຶ່ງມີຢູ່ໃນທັງສາມພຣະອົງຜູ້ຍິ່ງໃຫຍ່ ແລະ
ເປັນນິລັນດອນຂອງພວກເຮົາ.
39 ໂອ້ ຜູ້ຄົນ ຂອງແຜ່ນດິນເອີຍ, ຂໍໃຫ້
ພວກທ່ານຈົ່ງຟັງຄຳເວົ້າຂອງຂ້າພະເຈົ້າ
ເຖີດ! ແລະ ຂ້າພະເຈົ້າຂໍໃຫ້ພຣະພິໂລດ
ຂອງພຣະຜູ້ເປັນເຈົ້າຈົ່ງຫັນໜີໄປຈາກ
ພວກທ່ານ, ແລະ ວ່າພວກທ່ານຈະກັບໃຈ
ແລະ ລອດ.

## ບົດທີ 14

*ຊາມູເອນເວົ້າໄວ້ກ່ຽວກັບຄວາມແຈ້ງໃນຍາມກາງຄືນ ແລະ ດາວດວງໃໝ່ທີ່ປະກົດຂຶ້ນໃນເວລາທີ່ພຣະຄຣິດກຳເນີດ—ພຣະຄຣິດໄຖ່ມະນຸດຈາກຄວາມຕາຍທາງໂລກ ແລະ ທາງວິນຍານ—ເຄື່ອງໝາຍຂອງການສິ້ນພຣະຊົນຂອງພຣະອົງລວມທັງສາມມື້ແຫ່ງຄວາມມືດ, ການພັງທະລາຍຂອງກ້ອນຫີນ, ແລະ ການທຳລາຍຢ່າງຮ້າຍແຮງຂອງທຳມະຊາດ. ປະມານ 6 ປີກ່ອນ ຄ.ສ.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
[ກ]ຊາມູເອນຄົນເລມັນໄດ້ທຳນາຍອີກຫລາຍ
ເລື່ອງຊຶ່ງຂຽນໄວ້ບໍ່ໄດ້.
2 ແລະ ຈົ່ງ ເບິ່ງ, ເພິ່ນໄດ້ເວົ້າກັບພວກ
ເຂົາວ່າ: ຈົ່ງເບິ່ງ, ຂ້າພະເຈົ້າຈະໃຫ້ເຄື່ອງ
ໝາຍແກ່ພວກທ່ານ; ເພາະອີກຫ້າປີທີ່ຈະ
ມາເຖິງນີ້, ແລະ ຈົ່ງເບິ່ງ, ເວລານັ້ນພຣະບຸດ
ຂອງພຣະເຈົ້າຈະສະເດັດມາເພື່ອໄຖ່ຄົນ
ທັງປວງຜູ້ທີ່ເຊື່ອໃນພຣະນາມຂອງພຣະ
ອົງ.
3 ແລະ ຈົ່ງ ເບິ່ງ, ຂ້າພະເຈົ້າ ຈະ ໃຫ້ ສິ່ງ
ນີ້ ແກ່ພວກທ່ານ ເພື່ອເປັນ [ກ]ເຄື່ອງໝາຍ
ຂອງການສະເດັດມາ; ເພາະຈົ່ງເບິ່ງ, ມັນ
ຈະມີຄວາມແຈ້ງທີ່ສຸດໃນສະຫວັນ, ເຖິງຂະ
ໜາດທີ່ໃນຄືນກ່ອນທີ່ພຣະອົງຈະສະເດັດ
ມານັ້ນ, ມັນຈະບໍ່ມີຄວາມມືດເລີຍ, ເຖິງຂະ
ໜາດທີ່ມັນປະກົດແກ່ມະນຸດວ່າ ມັນເປັນ
ກາງເວັນ.
4 ສະນັ້ນ, ມັນ ຈະ ມີ ມື້ ໜຶ່ງ ກັບ ຄືນ ໜຶ່ງ
ແລະ ອີກມື້ໜຶ່ງ, ເບິ່ງຄືກັບວ່າເປັນມື້ດຽວ
ແລະ ບໍ່ມີກາງຄືນ; ແລະ ນີ້ຈະເປັນເຄື່ອງ
ໝາຍແກ່ພວກທ່ານ; ເພາະວ່າພວກທ່ານ
ຮູ້ຈັກເຖິງການຂຶ້ນຂອງດວງຕາເວັນ ແລະ
ການຕົກຂອງມັນນຳອີກ; ສະນັ້ນ ພວກ
ທ່ານຈະຮູ້ຈັກເຖິງຄວາມແນ່ນອນວ່າ ມັນ
ຈະມີສອງມື້ກັບໜຶ່ງຄືນ ເຖິງຢ່າງໃດກໍຕາມ
ຄືນນັ້ນຈະບໍ່ມີຄວາມມືດ ແລະ ມັນຈະເປັນ
ຄືນກ່ອນທີ່ [ກ]ພຣະອົງຈະກຳເນີດ.

38 *ກ* ມມ 2:15.
*ຂ* ແອວ 34:33–34.
*ຄ* ແອວ 41:10–11.

**14** 1 *ກ* ຮລມ 13:2.
3 *ກ* 3 ນຟ 1:15.
4 *ກ* ຄມພ ພຣະເຢຊູຄຣິດ—ການທຳນາຍກ່ຽວກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ.

5 ແລະ ຈົ່ງ ເບິ່ງ, ມັນ ຈະ ມີ [ກ]ດາວ ດວງ
ໃໝ່ປະກົດຂຶ້ນ, ຊຶ່ງເປັນດາວທີ່ພວກທ່ານ
ບໍ່ເຄີຍເຫັນມາກ່ອນ ແລະ ດາວດວງນີ້ຈະ
ເປັນເຄື່ອງໝາຍແກ່ພວກທ່ານຄືກັນ.
6 ແລະ ຈົ່ງ ເບິ່ງ ນີ້ ຍັງບໍ່ໝົດ, ມັນຈະມີ
ເຄື່ອງໝາຍ ແລະ ການແປກປະຫລາດ
ຫລາຍຢ່າງໃນທ້ອງຟ້າ.
7 ແລະ ເຫດການຈະບັງເກີດຂຶ້ນຄື ພວກ
ທ່ານທຸກຄົນຈະແປກປະຫລາດໃຈ ແລະ
ອັດສະຈັນໃຈຫລາຍ, ເຖິງຂະໜາດທີ່ພວກ
ທ່ານຈະ [ກ]ລົ້ມລົງຢູ່ກັບພື້ນດິນ.
8 ແລະ ເຫດການຈະບັງເກີດຂຶ້ນຄື ຜູ້ໃດ
ກໍຕາມທີ່ [ກ]ເຊື່ອໃນພຣະບຸດຂອງພຣະເຈົ້າ,
ຜູ້ນັ້ນຈະມີຊີວິດອັນເປັນນິດ.
9 ແລະ ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ບັນ
ຊາຂ້າພະເຈົ້າໂດຍທູດຂອງພຣະອົງ, ວ່າ
ໃຫ້ຂ້າພະເຈົ້າມາບອກເລື່ອງນີ້ແກ່ພວກ
ທ່ານ; ແທ້ຈິງແລ້ວ, ພຣະອົງໄດ້ບັນຊາໃຫ້
ຂ້າພະເຈົ້າທຳນາຍເລື່ອງເຫລົ່ານີ້ແກ່ພວກ
ທ່ານ; ແທ້ຈິງແລ້ວ, ພຣະອົງໄດ້ກ່າວກັບຂ້າ
ພະເຈົ້າວ່າ: ຈົ່ງປ່າວປະກາດຕໍ່ຜູ້ຄົນພວກນີ້
ວ່າ ຈົ່ງກັບໃຈ ແລະ ຕຽມທາງຂອງພຣະຜູ້
ເປັນເຈົ້າ.
10 ແລະ ບັດນີ້, ເພາະຂ້າພະເຈົ້າເປັນ
ຄົນເລມັນ, ແລະ ເວົ້າກັບ ພວກທ່ານ ມາ
ແລ້ວເຖິງພຣະຄຳທີ່ພຣະເຈົ້າໄດ້ບັນຊາຂ້າ
ພະເຈົ້າ, ແລະ ເພາະມັນໄດ້ຕຳນິພວກທ່ານ
ຢ່າງຮຸນແຮງ, ພວກທ່ານຈຶ່ງຄຽດແຄ້ນໃຫ້
ຂ້າພະເຈົ້າ ແລະ ພະຍາຍາມທີ່ຈະທຳລາຍ
ຂ້າພະເຈົ້າ, ແລະ ໄດ້ [ກ]ຂັບໄລ່ຂ້າພະເຈົ້າ
ອອກໄປຈາກບັນດາພວກທ່ານ.
11 ແລະ ຂໍໃຫ້ພວກທ່ານຈົ່ງຟັງຄຳເວົ້າ
ຂອງຂ້າພະເຈົ້າກ່ອນເຖີດ, ເພາະວ່າດ້ວຍ
ເຈດຕະນານີ້ ຂ້າພະເຈົ້າຈຶ່ງໄດ້ຂຶ້ນມາເທິງ
ກຳແພງເມືອງນີ້, ເພື່ອພວກທ່ານຈະໄດ້ຍິນ
ແລະ ຮູ້ເຖິງການພິພາກສາຂອງພຣະເຈົ້າ
ຊຶ່ງຄອຍຖ້າພວກທ່ານຢູ່ ເພາະຄວາມຊົ່ວ
ຮ້າຍຂອງພວກທ່ານ, ແລະ ເພື່ອວ່າພວກ
ທ່ານຈະໄດ້ຮູ້ເຖິງເງື່ອນໄຂຂອງການກັບ
ໃຈນຳອີກ.
12 ແລະ ເພື່ອວ່າພວກທ່ານຈະໄດ້ຮູ້ຈັກ
ເຖິງການສະເດັດມາຂອງພຣະເຢຊູຄຣິດນຳ
ອີກ, ຜູ້ເປັນພຣະບຸດຂອງພຣະເຈົ້າ, ຜູ້ເປັນ
[ກ]ພຣະບິດາຂອງສະຫວັນ ແລະ ຂອງແຜ່ນ
ດິນໂລກ, ຜູ້ເປັນພຣະຜູ້ສ້າງສາລະພັດສິ່ງ
ຕັ້ງແຕ່ຕົ້ນ; ແລະ ເພື່ອວ່າພວກທ່ານຈະໄດ້
ຮູ້ເຖິງເຄື່ອງໝາຍຂອງການສະເດັດມາຂອງ
ພຣະອົງ, ດ້ວຍເຈດຕະນານີ້ ພວກທ່ານຈະ
ໄດ້ເຊື່ອໃນພຣະນາມຂອງພຣະອົງ.
13 ແລະ ຖ້າຫາກພວກທ່ານ [ກ]ເຊື່ອໃນ
ພຣະນາມຂອງພຣະອົງແລ້ວ, ພວກທ່ານ
ຈະກັບໃຈຈາກບາບທັງໝົດຂອງພວກ
ທ່ານ, ເພື່ອດ້ວຍເຫດນີ້ ພວກທ່ານຈະໄດ້
ຮັບການປົດບາບໂດຍ [ຂ]ພຣະຄຸນຄວາມດີ
ຂອງພຣະອົງ.
14 ແລະ ຈົ່ງເບິ່ງ, ອີກອັນໜຶ່ງ, ຂ້າພະເຈົ້າ
ຈະໃຫ້ເຄື່ອງໝາຍອີກຢ່າງໜຶ່ງແກ່ພວກ
ທ່ານ, ແທ້ຈິງແລ້ວ, ຄືເຄື່ອງໝາຍຂອງການ
ສິ້ນພຣະຊົນຂອງພຣະອົງ.
15 ເພາະ ຈົ່ງເບິ່ງ, ພຣະອົງຈະສິ້ນພຣະ
ຊົນຢ່າງແນ່ນອນເພື່ອ [ກ]ຄວາມລອດຈະມີ
ຂຶ້ນ; ແທ້ຈິງແລ້ວ, ພຣະອົງເຫັນວ່າ ມັນຈຳ
ເປັນ ແລະ ມັນເປັນການສົມຄວນທີ່ພຣະ
ອົງຈະສິ້ນພຣະຊົນ, ເພື່ອເຮັດໃຫ້ເກີດ

5 ກ ມທ 2:1–2;
3 ນຟ 1:21.
7 ກ 3 ນຟ 1:16–17.
8 ກ ຢຮ 3:16.
10 ກ ຮລມ 13:2.
12 ກ ມຊຢ 3:8;
3 ນຟ 9:15;
ອທ 4:7.
ຄມພ ພຣະເຢຊູຄຣິດ.
13 ກ ກຈກ 16:30–31.
ຂ ຄພ 19:16–20.
15 ກ ຄມພ ພຣະຜູ້ຊ່ວຍໃຫ້ລອດ.

[ຂ]ການ ຟື້ນ ຄືນ ຊີ ວິດ ຂອງ ຄົນ ຕາຍ, ເພື່ອ ໂດຍການສິ້ນພຣະຊົນນີ້ ມະນຸດຈະຖືກນຳ ເຂົ້າມາຫາທີ່ປະທັບຂອງພຣະຜູ້ເປັນເຈົ້າ.

16 ແທ້ຈິງແລ້ວ, ຈົ່ງເບິ່ງ, ການສິ້ນພຣະຊົນນີ້ຈະເຮັດໃຫ້ເກີດການຟື້ນຄືນຊີວິດ, ແລະ [ກ]ໄຖ່ມະນຸດຊາດທັງປວງຈາກຄວາມຕາຍຄັ້ງທຳອິດ—ຊຶ່ງເປັນຄວາມຕາຍທາງວິນຍານ; ໂດຍ [ຂ]ການຕົກຂອງອາດາມ ມະນຸດຊາດທັງປວງຈຶ່ງຖືກ [ຄ]ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ, ແລະ ຖືວ່າ [ງ]ຕາຍແລ້ວ, ຊຶ່ງເປັນທັງທາງໂລກ ແລະ ທາງວິນຍານ.

17 ແຕ່ ຈົ່ງເບິ່ງ, ການຟື້ນຄືນພຣະຊົນຂອງພຣະຄຣິດ [ກ]ໄຖ່ມະນຸດຊາດ, ແທ້ຈິງແລ້ວ, ເຖິງແມ່ນມະນຸດຊາດທັງປວງ, ແລະ ນຳພວກເຂົາກັບເຂົ້າໄປຫາທີ່ປະທັບຂອງພຣະຜູ້ເປັນເຈົ້າ.

18 ແທ້ຈິງແລ້ວ, ແລະ ມັນເຮັດໃຫ້ເກີດເງື່ອນໄຂແຫ່ງການກັບໃຈ, ຄືຜູ້ໃດກໍຕາມທີ່ກັບໃຈ ຜູ້ນັ້ນຍ່ອມບໍ່ຖືກໂຄ່ນລົງ ແລະ ໂຍນເຂົ້າກອງໄຟ; ແຕ່ຜູ້ໃດກໍຕາມທີ່ບໍ່ກັບໃຈ ຜູ້ນັ້ນຍ່ອມຖືກໂຄ່ນລົງ ແລະ ໂຍນເຂົ້າກອງໄຟ; ແລະ ຄວາມຕາຍທາງວິນຍານຈະມາເຖິງພວກເຂົາອີກ, ແທ້ຈິງແລ້ວ, ຄືຄວາມຕາຍຄັ້ງທີສອງ, ເພາະວ່າພວກເຂົາຖືກຕັດອອກໄປອີກຈາກສິ່ງທີ່ກ່ຽວຂ້ອງກັບຄວາມຊອບທຳ.

19 ສະນັ້ນ ພວກທ່ານຈົ່ງກັບໃຈ, ພວກທ່ານຈົ່ງກັບໃຈເຖີດ, ເມື່ອພວກທ່ານຮູ້ຈັກເລື່ອງເຫລົ່ານີ້ແລ້ວ ແຕ່ບໍ່ປະຕິບັດຕາມ ພວກທ່ານຈະປ່ອຍໃຫ້ຕົນເອງມາຢູ່ພາຍໃຕ້ການກ່າວໂທດ, ແລະ ພວກທ່ານຈະຖືກນຳລົງໄປຫາຄວາມຕາຍຄັ້ງທີສອງນີ້.

20 ແຕ່ຈົ່ງເບິ່ງ, ຄືກັນກັບທີ່ຂ້າພະເຈົ້າໄດ້ກ່າວກັບພວກທ່ານມາແລ້ວ, ກ່ຽວກັບ [ກ]ເຄື່ອງໝາຍອີກຢ່າງໜຶ່ງ, ຄືເຄື່ອງໝາຍຂອງການສິ້ນພຣະຊົນຂອງພຣະອົງ, ຈົ່ງເບິ່ງ, ໃນມື້ນັ້ນ ມື້ທີ່ພຣະອົງຈະຮັບເອົາຄວາມຕາຍ, ດວງຕາເວັນຈະ [ຂ]ມືດດັບ ແລະ ບໍ່ໃຫ້ຄວາມສະຫວ່າງຂອງມັນແກ່ພວກທ່ານ, ແລະ ດວງເດືອນກັບດວງດາວນຳອີກ, ແລະ ມັນຈະບໍ່ມີຄວາມສະຫວ່າງໃນຜືນແຜ່ນດິນນີ້ ນັບຕັ້ງແຕ່ເວລາທີ່ພຣະອົງຮັບເອົາຄວາມຕາຍໄປຈົນເຖິງ [ຄ]ສາມມື້, ຈົນວ່າເຖິງເວລາທີ່ພຣະອົງຈະລຸກຂຶ້ນອີກຈາກຄວາມຕາຍ.

21 ແທ້ຈິງແລ້ວ, ໃນເວລາທີ່ພຣະອົງຈະປ່ອຍຈິດວິນຍານຂຶ້ນໄປ ມັນຈະມີ [ກ]ຟ້າຮ້ອງ ແລະ ຟ້າແມບເຫລື້ອມເປັນເວລາຫລາຍຊົ່ວໂມງ ແລະ ແຜ່ນດິນຈະສັ່ນຫວັ່ນໄຫວ ແລະ ຫີນຊຶ່ງຢູ່ໃນແຜ່ນດິນນີ້ ທີ່ຢູ່ທາງເທິງ ແລະ ທາງໃຕ້ໜ້າດິນຈະພັງທະລາຍ, ຊຶ່ງພວກທ່ານຮູ້ຢູ່ແລ້ວວ່າ ໃນເວລານີ້ຫີນນັ້ນແຂງແກ່ນຊ່ຳໃດ, ຫລື ແຜ່ນດິນທີ່ເປັນແຜ່ນອັນກວ້າງໃຫຍ່ຈະ [ຂ]ແຕກແຍກອອກໄປ;

22 ແທ້ຈິງແລ້ວ, ມັນຈະແຍກອອກເປັນສອງ, ແລະ ນັບຕັ້ງແຕ່ນັ້ນໄປ ຈະ [ກ]ເຫັນເປັນຮ່ອງ ແລະ ຮອຍແຕກ, ແລະ ເປັນເສດແຕກຫັກຢູ່ທົ່ວທັງແຜ່ນດິນໂລກ, ແທ້ຈິງແລ້ວ ທັງທາງເທິງ ແລະ ທາງໃຕ້ໜ້າດິນ.

23 ແລະ ຈົ່ງເບິ່ງ, ມັນຈະມີພະຍຸຝົນຟ້າຄະນອງໃຫຍ່, ແລະ ພູຜາຫລາຍໜ່ວຍ

15 ຂ ແອວ 42:23.
ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
16 ກ ຄມພ ແຜນແຫ່ງການໄຖ່.
ຂ ຄມພ ການຕົກຂອງອາດາມ ແລະ ເອວາ.
ຄ ແອວ 42:6–9.
ງ ຄມພ ຄວາມຕາຍທາງວິນຍານ.
17 ກ ຄມພ ໄຖ່, ການໄຖ່, ຖືກໄຖ່.
20 ກ 3 ນຟ 8:5–25.
ຂ ລກ 23:44.
ຄ ມຊຍ 3:10.
21 ກ 3 ນຟ 8:6.
ຂ 3 ນຟ 10:9.
22 ກ 3 ນຟ 8:18.

ຈະພັງທະລາຍລົງເປັນຮ່ອມພູ, ແລະ ຈະມີບ່ອນຫລາຍແຫ່ງຊຶ່ງດຽວນີ້ເອີ້ນກັນວ່າຮ່ອມພູຈະກັບເປັນພູເຂົາ, ຊຶ່ງມີຄວາມສູງທີ່ສຸດ.

24 ແລະ ທາງໃຫຍ່ຫລາຍສາຍຈະຂາດອອກ, ແລະ ຫລາຍ [ກ]ຫົວເມືອງຈະກັບມາຮົກຮ້າງ.

25 ແລະ [ກ]ຫລຸມ ຝັງ ສົບ ເປັນ ຈຳນວນຫລວງຫລາຍຈະເປີດອອກ, ແລະ ປ່ອຍຄົນຕາຍຂຶ້ນເປັນຈຳນວນຫລວງຫລາຍ; ແລະໄພ່ພົນຂອງພຣະເຈົ້າຢ່າງຫລວງຫລາຍຈະມາປະກົດແກ່ຄົນຢ່າງຫລວງຫລາຍ.

26 ແລະ ຈົ່ງເບິ່ງ, [ກ]ທູດໄດ້ບອກຂ້າພະເຈົ້າດັ່ງນີ້; ເພາະເພິ່ນໄດ້ເວົ້າກັບຂ້າພະເຈົ້າວ່າ ມັນຈະມີຟ້າຮ້ອງ ແລະ ຟ້າແມບເຫລື້ອມເປັນເວລາຫລາຍຊົ່ວໂມງ.

27 ແລະ ເພິ່ນໄດ້ເວົ້າກັບຂ້າພະເຈົ້າວ່າ ໃນຂະນະທີ່ຟ້າຮ້ອງ ແລະ ຟ້າແມບເຫລື້ອມ, ແລະ ພະຍຸຝົນຟ້າຄະນອງຍັງມີຢູ່, ວ່າສິ່ງເຫລົ່ານີ້ຈະເປັນໄປ, [ກ]ຄວາມມືດຈະປົກຄຸມທັງແຜ່ນດິນໂລກເປັນເວລາສາມມື້.

28 ແລະ ທູດໄດ້ເວົ້າກັບຂ້າພະເຈົ້າວ່າຄົນຢ່າງຫລວງຫລາຍຈະໄດ້ເຫັນສິ່ງທີ່ອັດສະຈັນໃຈຫລາຍກວ່ານັ້ນ, ເພາະມີເຈດຕະນາທີ່ຈະໃຫ້ພວກເຂົາເຊື່ອວ່າ [ກ]ເຄື່ອງໝາຍ ແລະ ການແປກປະຫລາດເຫລົ່ານີ້ຈະເກີດຂຶ້ນທົ່ວພື້ນແຜ່ນດິນນີ້ ໂດຍມີເຈດຕະນາທີ່ຈະບໍ່ໃຫ້ມີສາເຫດຂອງການບໍ່ເຊື່ອຖືໃນບັນດາລູກຫລານມະນຸດ—

29 ແລະ ນີ້ດ້ວຍເຈດຕະນາວ່າ ຜູ້ໃດກໍຕາມທີ່ມີຄວາມເຊື່ອ ຜູ້ນັ້ນຈະລອດ, ແລະຜູ້ໃດກໍຕາມທີ່ຈະບໍ່ເຊື່ອ, [ກ]ການພິພາກສາອັນຊອບທຳຈະມາສູ່ຜູ້ນັ້ນ; ແລະ ຖ້າຫາກພວກເຂົາຖືກກ່າວໂທດ, ພວກເຂົາກໍເປັນຜູ້ນຳການກ່າວໂທດນັ້ນມາສູ່ຕົນເອງ.

30 ແລະ ບັດນີ້ຈົ່ງຈື່ຈຳໄວ້, ຈົ່ງຈື່ຈຳໄວ້ພີ່ນ້ອງຂອງຂ້າພະເຈົ້າ, ວ່າຜູ້ໃດກໍຕາມທີ່ຕາຍໄປ, ກໍເປັນຍ້ອນວ່າລາວສ້າງຄວາມຕາຍໃຫ້ຕົວລາວເອງ, ແລະ ຜູ້ໃດກໍຕາມທີ່ກະທຳຄວາມຊົ່ວຮ້າຍ, ຜູ້ນັ້ນກໍຈະນຳຄວາມຊົ່ວຮ້າຍມາສູ່ຕົວເຂົາເອງ; ເພາະຈົ່ງເບິ່ງ, ພວກທ່ານມີ [ກ]ອິດສະລະ; ພວກທ່ານໄດ້ຮັບອະນຸຍາດໃຫ້ເຮັດເພື່ອຕົວເອງ; ເພາະຈົ່ງເບິ່ງ, ພຣະເຈົ້າໄດ້ປະທານ [ຂ]ຄວາມຮູ້ໃຫ້ແກ່ພວກທ່ານ ແລະ ພຣະອົງໄດ້ເຮັດໃຫ້ພວກທ່ານເປັນອິດສະລະ.

31 ພຣະອົງປະທານມັນໃຫ້ພວກທ່ານເພື່ອວ່າພວກທ່ານຈະໄດ້ [ກ]ຮູ້ຈັກຄວາມດີຈາກຄວາມຊົ່ວ, ແລະ ພຣະອົງຈະປະທານມັນໃຫ້ພວກທ່ານເພື່ອວ່າ ພວກທ່ານຈະໄດ້ [ຂ]ເລືອກເອົາຊີວິດ ຫລື ຄວາມຕາຍ; ແລະພວກທ່ານສາມາດເຮັດຄວາມດີໄດ້ ແລະຖືກ [ຄ]ນຳກັບຄືນຫາສິ່ງທີ່ດີ, ຫລື ໃຫ້ສິ່ງທີ່ດີກັບຄືນມາຫາພວກທ່ານ; ຫລື ພວກທ່ານສາມາດເຮັດຄວາມຊົ່ວໄດ້, ແລະ ໃຫ້ສິ່ງທີ່ຊົ່ວກັບຄືນມາຫາພວກທ່ານ.

## ບົດທີ 15

*ພຣະຜູ້ເປັນເຈົ້າຕີສອນຊາວນີໄຟເພາະພຣະອົງຮັກພວກເຂົາ—ຊາວເລມັນທີ່ປ່ຽນໃຈເຫລື້ອມໃສມີສັດທາອັນໝັ້ນຄົງ ແລະ*

24 *ກ* 3 ນຟ 9:3–12.
25 *ກ* ມທ 27:50–54; 3 ນຟ 23:9–11.
26 *ກ* ແອວ 13:26.
27 *ກ* 1 ນຟ 19:10; 3 ນຟ 8:3.
28 *ກ* 1 ນຟ 12:4–5.
29 *ກ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
30 *ກ* 2 ນຟ 2:26–29; ມຊ 6:56. ຄມພ ອຳເພີໃຈ.
*ຂ* ຄມພ ຄວາມຮູ້.
31 *ກ* ມຣນ 7:16.
*ຂ* 2 ນຟ 2:28–29; ແອວ 3:26–27.
*ຄ* ແອວ 41:3–5.

*ແນ່ ແນ່—ພຣະ ຜູ້ ເປັນ ເຈົ້າ ຈະ ເມດ ຕາ ຊາວເລມັນໃນຍຸກສຸດທ້າຍ. ປະມານ 6 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າ
ພະເຈົ້າ, ຈົ່ງເບິ່ງ, ຂ້າພະເຈົ້າຂໍປະກາດກັບ
ພວກທ່ານວ່າ ຖ້າຫາກພວກທ່ານບໍ່ກັບໃຈ
ແລ້ວບ້ານເຮືອນຂອງພວກທ່ານຈະຖືກປະ
ຖິ້ມໃຫ້ [ກ]ຮົກຮ້າງ.
2 ແທ້ຈິງແລ້ວ, ຖ້າຫາກພວກທ່ານບໍ່ກັບ
ໃຈ ເຫດຮ້າຍອັນໃຫຍ່ຫລວງນັ້ນຈະເຮັດ
ໃຫ້ພວກແມ່ຍິງຂອງພວກທ່ານເປັນທຸກໃນ
ມື້ທີ່ນາງຍັງເປັນແມ່ລູກອ່ອນຢູ່; ເພາະວ່າ
ພວກທ່ານຈະພະຍາຍາມໜີໄປ ແລະ ຈະ
ບໍ່ມີບ່ອນພັກພາອາໄສ; ແທ້ຈິງແລ້ວ, ແລະ
ວິບັດແກ່ນາງຜູ້ທີ່ [ກ]ຖືພາ ເພາະນາງຈະໜັກ
ທ້ອງ ແລະ ໜີໄປບໍ່ໄດ້; ສະນັ້ນ, ນາງຈຶ່ງຈະ
ຖືກຢຽບຢ່ຳ ແລະ ຖືກປະຖິ້ມໃຫ້ຕາຍໄປ.
3 ແທ້ຈິງແລ້ວ, ວິບັດແກ່ຜູ້ຄົນພວກນີ້ຜູ້ມີ
ຊື່ວ່າຜູ້ຄົນຂອງນີໄຟ ຖ້າຫາກພວກເຂົາບໍ່
ກັບໃຈໃນເວລາທີ່ພວກເຂົາໄດ້ເຫັນເຄື່ອງ
ໝາຍ ແລະ ການແປກປະຫລາດທັງໝົດ
ນີ້ ຊຶ່ງຈະສະແດງແກ່ພວກເຂົາ; ເພາະຈົ່ງ
ເບິ່ງ, ພວກເຂົາເປັນຜູ້ຄົນທີ່ພຣະຜູ້ເປັນເຈົ້າ
ເລືອກໄວ້; ແທ້ຈິງແລ້ວ, ພຣະອົງຮັກຜູ້ຄົນ
ຂອງນີໄຟ, ແລະ ພຣະອົງໄດ້ຕີສອນພວກ
ເຂົານຳອີກ; ແທ້ຈິງແລ້ວ, ໃນເວລາທີ່ພວກ
ເຂົາກະທຳຄວາມຊົ່ວຮ້າຍ ພຣະອົງໄດ້ [ກ]ຕີ
ສອນພວກເຂົາ ເພາະພຣະອົງຮັກພວກ
ເຂົາ.
4 ແຕ່ ຈົ່ງ ເບິ່ງ ພີ່ ນ້ອງ ຂອງ ຂ້າ ພະ ເຈົ້າ,
ພຣະອົງກຽດຊັງຊາວເລມັນ ເພາະວ່າພວກ
ເຂົາກະທຳຄວາມຊົ່ວຢູ່ຕະຫລອດເວລາ,
ແລະ ມັນເປັນຍ້ອນຄວາມຊົ່ວຮ້າຍຂອງ
[ກ]ຮີດຄອງປະເພນີຂອງບັນພະບຸລຸດຂອງ
ພວກເຂົາ. ແຕ່ຈົ່ງເບິ່ງ, ຄວາມລອດໄດ້ມາ
ເຖິງພວກເຂົາແລ້ວ ໂດຍທາງການສັ່ງສອນ
ຂອງຊາວນີໄຟ; ແລະ ດ້ວຍເຈດຕະນານີ້
ພຣະຜູ້ເປັນເຈົ້າຈຶ່ງເຮັດໃຫ້ວັນເວລາຂອງ
ພວກເຂົາ [ຂ]ຍືດຍາວອອກໄປ.
5 ແລະ ຂ້າພະເຈົ້າຢາກໃຫ້ພວກທ່ານ
ເຫັນວ່າ ພວກເຂົາ [ກ]ສ່ວນຫລາຍຢູ່ໃນທາງ
ແຫ່ງໜ້າທີ່ຂອງຕົນ, ແລະ ພວກເຂົາເດີນ
ໄປຢ່າງຮອບຄອບຕໍ່ພຣະພັກຂອງພຣະ
ເຈົ້າ, ແລະ ພວກເຂົາຍຶດຖືທີ່ຈະຮັກສາ
ພຣະບັນຍັດ ແລະ ຮັກສາຂໍ້ກຳນົດ ແລະ
ຮັກສາການພິພາກສາຂອງພຣະອົງຕາມ
ກົດຂອງໂມເຊ.
6 ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ ພວກເຂົາສ່ວນຫລາຍກຳລັງກະ
ທຳຢ່າງນີ້, ແລະ ພວກເຂົາກຳລັງພະຍາ
ຍາມດ້ວຍຄວາມພາກພຽນອັນບໍ່ຮູ້ອິດ
ເມື່ອຍທີ່ຈະນຳພາພີ່ນ້ອງທີ່ເຫລືອຢູ່ຂອງ
ພວກເຂົາມາສູ່ຄວາມຮູ້ເລື່ອງຄວາມຈິງ;
ສະນັ້ນ ທຸກໆມື້ພວກເຂົາຈຶ່ງມີຄົນມາເພີ່ມ
ຫລາຍຂຶ້ນ.
7 ແລະ ຈົ່ງ ເບິ່ງ, ພວກ ທ່ານ ໄດ້ ຮູ້ ດ້ວຍ
ຕົວເອງແລ້ວ, ເພາະພວກທ່ານໄດ້ເຫັນມາ
ແລ້ວ, ວ່າຫລາຍຕໍ່ຫລາຍຄົນໄດ້ຖືກນຳມາ
ສູ່ຄວາມຮູ້ເລື່ອງຄວາມຈິງ, ແລະ ໃຫ້ຮູ້ເລື່ອງ
ຮີດຄອງປະເພນີອັນຊົ່ວຮ້າຍ ແລະ ໜ້າກຽດ
ຊັງຂອງບັນພະບຸລຸດຂອງພວກເຂົາ, ແລະ
ຖືກຊັກຊວນໃຫ້ມາເຊື່ອພຣະຄຳພີອັນສັກ
ສິດ, ແທ້ຈິງແລ້ວ, ໃຫ້ມາເຊື່ອຄຳທຳນາຍ
ຂອງສາດສະດາຜູ້ບໍລິສຸດ ຊຶ່ງມີຂຽນໄວ້ ຊຶ່ງ
ໄດ້ຊັກຊວນໃຫ້ພວກເຂົາມີສັດທາໃນພຣະ

**15** 1 *ກ* ມທ 23:37–38.
2 *ກ* ມທ 24:19.
3 *ກ* ສພສ 3:12;
ຮຣ 12:5–11;
ຄພ 95:1.
4 *ກ* ຄມພ ປະເພນີ.
*ຂ* ແອວ 9:16.
5 *ກ* ຣລມ 13:1.

ຜູ້ ເປັນ ເຈົ້າ, ແລະ ມາ ສູ່ ການ ກັບ ໃຈ, ຊຶ່ງ
ສັດທາ ແລະ ການກັບ ໃຈນັ້ນ ໄດ້ນຳການ
[ກ]ປ່ຽນແປງມາສູ່ໃຈຂອງພວກເຂົາ—
8 ສະນັ້ນ, ພວກທ່ານຈຶ່ງຮູ້ດ້ວຍຕົວເອງ
ວ່າ, ຫລາຍຕໍ່ຫລາຍຄົນທີ່ໄດ້ມາເຖິງຈຸດນີ້
ຍ່ອມ [ກ]ໝັ້ນຄົງ ແລະ ແນ່ວແນ່ຢູ່ໃນສັດທາ,
ແລະ ຢູ່ໃນສິ່ງທີ່ເຮັດໃຫ້ພວກເຂົາເປັນ
ອິດສະລະ.
9 ແລະ ພວກທ່ານກໍຮູ້ອີກວ່າ ພວກເຂົາ
ໄດ້ [ກ]ຝັງອາວຸດແຫ່ງສົງຄາມຂອງພວກ
ເຂົາໄວ້, ແລະ ພວກເຂົາຢ້ານທີ່ຈະເອົາມັນ
ຂຶ້ນມາເພາະຢ້ານວ່າໃນທາງໃດທາງໜຶ່ງ
ພວກເຂົາຈະເຮັດບາບ; ແທ້ຈິງແລ້ວ, ພວກ
ທ່ານເຫັນໄດ້ວ່າ ພວກເຂົາຢ້ານທີ່ຈະເຮັດ
ບາບ—ເພາະຈົ່ງເບິ່ງ ພວກເຂົາຈະຍອມ
ຕົວໃຫ້ສັດຕູຂອງພວກເຂົາຢຽບຢ່ຳ ແລະ
ຂ້າຖິ້ມ, ແລະ ຈະບໍ່ຍອມຍົກດາບຂອງພວກ
ເຂົາຂຶ້ນເພື່ອຕໍ່ສູ້ພວກເຂົາ, ແລະ ນີ້ກໍເປັນ
ເພາະສັດທາຂອງພວກເຂົາໃນພຣະຄຣິດ.
10 ແລະ ບັດນີ້, ເປັນຍ້ອນຄວາມແນ່ວ
ແນ່ຂອງພວກເຂົາໃນສິ່ງທີ່ພວກເຂົາໄດ້
ເຊື່ອຖື, ແລະ ເປັນຍ້ອນຄວາມໝັ້ນຄົງຂອງ
ພວກເຂົາ ເວລາພວກເຂົາໄດ້ຮັບແສງສະ
ຫວ່າງມາແລ້ວເທື່ອໜຶ່ງ, ຈົ່ງເບິ່ງ, ພຣະຜູ້
ເປັນເຈົ້າຈະປະທານພອນໃຫ້ແກ່ພວກເຂົາ
ແລະ ຈະເຮັດໃຫ້ວັນເວລາຂອງພວກເຂົາ
ຍືດຍາວອອກໄປ, ທັງໆທີ່ພວກເຂົາເຄີຍ
ສ້າງຄວາມຊົ່ວຮ້າຍມາກ່ອນ—
11 ແທ້ຈິງແລ້ວ, ເຖິງແມ່ນວ່າພວກເຂົາ
ຈະເສື່ອມໂຊມລົງສູ່ຄວາມບໍ່ເຊື່ອຖື ພຣະ
ຜູ້ເປັນເຈົ້າກໍຍັງຈະເຮັດໃຫ້ວັນເວລາຂອງ
ພວກເຂົາ [ກ]ຍືດຍາວອອກໄປ, ຈົນເຖິງເວລາ
ທີ່ກ່າວໄວ້ໂດຍບັນພະບຸລຸດຂອງພວກເຮົາ,
ແລະ ໂດຍສາດສະດາ [ຂ]ຊີນັດ ແລະ ສາດ
ສະດາຄົນອື່ນໆອີກຫລາຍທ່ານກ່ຽວກັບ
[ຄ]ການນຳພີ່ນ້ອງຊາວເລມັນຂອງພວກເຮົາ
ກັບຄືນມາສູ່ຄວາມຮູ້ເລື່ອງຄວາມຈິງອີກ—
12 ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບ
ພວກທ່ານວ່າ [ກ]ຄຳສັນຍາຂອງພຣະຜູ້ເປັນ
ເຈົ້າຈະຖືກມອບໃຫ້ແກ່ຊາວເລມັນຜູ້ເປັນພີ່
ນ້ອງຂອງພວກເຂົາໃນຍຸກສຸດທ້າຍ; ແລະ
ເຖິງແມ່ນວ່າພວກເຂົາຈະໄດ້ຮັບຄວາມ
ທຸກຫລາຍປານໃດກໍຕາມ, ແລະ ເຖິງແມ່ນ
ວ່າພວກເຂົາຈະຖືກ [ຂ]ຂັບໄລ່ໄປມາທົ່ວ
ພື້ນແຜ່ນດິນໂລກ, ແລະ ຈະຖືກຕາມລ້າ,
ແລະ ຈະຖືກທຸບຕີ, ແລະ ຈະແຕກກະຈັດ
ກະຈາຍໄປ, ແລະ ບໍ່ມີບ່ອນພັກພາອາໄສກໍ
ຕາມ, ແຕ່ພຣະຜູ້ເປັນເຈົ້າຍັງຈະ [ຄ]ເມດຕາ
ພວກເຂົາຢູ່.
13 ແລະ ຈະເປັນເຊັ່ນນີ້ຕາມຄຳທຳນາຍ,
ເພື່ອພວກເຂົາຈະ [ກ]ມາສູ່ຄວາມຮູ້ທີ່ແທ້ຈິງ,
ຊຶ່ງເປັນຄວາມຮູ້ເຖິງພຣະຜູ້ໄຖ່ ແລະ [ຂ]ຜູ້
ລ້ຽງຜູ້ຍິ່ງໃຫຍ່ ແລະ ແທ້ຈິງຂອງພວກເຂົາ,
ແລະ ຖືກນັບເຂົ້າຢູ່ໃນບັນດາຝູງແກະຂອງ
ພຣະອົງ.
14 ສະນັ້ນ ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ມັນຈະເປັນ [ກ]ສິ່ງດີສຳລັບພວກ
ເຂົາຫລາຍກວ່າພວກທ່ານ ຖ້າຫາກພວກ
ທ່ານບໍ່ກັບໃຈ.
15 ເພາະຈົ່ງເບິ່ງ, ວຽກງານອັນຍິ່ງໃຫຍ່
[ກ]ຖືກສະແດງແກ່ພວກເຂົາຄືກັນກັບທີ່ໄດ້
ຖືກສະແດງແກ່ພວກທ່ານ, ແທ້ຈິງແລ້ວ,

7 *ກ* ຄມພ ປ່ຽນໃຈ, ການ ປ່ຽນໃຈເຫລື້ອມໃສ.
8 *ກ* ແອວ 23:6; 27:27; 3 ນຟ 6:14.
9 *ກ* ແອວ 24:17–19.
11 *ກ* ແອວ 9:16.
*ຂ* ຮລມ 8:19.
*ຄ* 2 ນຟ 30:5–8.
12 *ກ* ອນ 1:12–13.
*ຂ* ມມ 5:15.
*ຄ* 1 ນຟ 13:31; 2 ນຟ 10:18–19; ຢຄ 3:5–6.
13 *ກ* 3 ນຟ 16:12.
*ຂ* ຄມພ ຜູ້ລ້ຽງທີ່ດີ.
14 *ກ* ຮລມ 7:23.
15 *ກ* ມທ 11:20–23.

ມັນໄດ້ຖືກສະແດງແກ່ຜູ້ທີ່ເສື່ອມໂຊມຢູ່ໃນ
ຄວາມບໍ່ເຊື່ອຖື ເພາະຮີດຄອງປະເພນີຂອງ
ບັນພະບຸລຸດຂອງພວກເຂົາ, ພວກທ່ານໄດ້
ເຫັນມາດ້ວຍຕົວເອງແລ້ວວ່າ ພວກເຂົາຈະ
ບໍ່ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖືຕໍ່ໄປອີກ
ແລ້ວ.
16 ສະນັ້ນ, ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວ
ວ່າ: ເຮົາຈະບໍ່ທຳລາຍພວກ ເຂົາຈົນ ໝົດ
ສິ້ນ, ແຕ່ເຮົາຈະເຮັດໃຫ້ພວກເຂົາກັບມາ
ຫາເຮົາອີກ ໃນວັນແຫ່ງຄວາມສະຫລຽວ
ສະຫລາດຂອງເຮົາ, ພຣະຜູ້ເປັນເຈົ້າໄດ້
ກ່າວ.
17 ແລະ ບັດນີ້ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ, ກ່ຽວກັບຜູ້ຄົນຂອງຊາວນີໄຟ: ຖ້າ
ຫາກພວກເຂົາຈະບໍ່ກັບ ໃຈ ແລະ ບໍ່ຕັ້ງໃຈ
ທີ່ຈະເຮັດຕາມພຣະປະສົງຂອງເຮົາແລ້ວ,
ເຮົາຈະ [ກ]ທຳລາຍພວກເຂົາ ໃຫ້ໝົດ ສິ້ນ
ໄປ, ພຣະຜູ້ເປັນເຈົ້າໄດ້ກ່າວ, ເພາະຄວາມ
ບໍ່ເຊື່ອຖືຂອງພວກເຂົາ ທັງໆທີ່ເຮົາໄດ້ກະ
ທຳວຽກງານອັນຍິ່ງໃຫຍ່ຫລາຍຢ່າງໃນບັນ
ດາພວກເຂົາ; ແລະ ຕາບໃດທີ່ພຣະຜູ້ເປັນ
ເຈົ້າຊົງພຣະຊົນຢູ່ຢ່າງແນ່ນອນສັນໃດ, ສິ່ງ
ເຫລົ່ານີ້ຈະເປັນໄປສັນນັ້ນ, ພຣະຜູ້ເປັນ
ເຈົ້າໄດ້ກ່າວ.

## ບົດທີ 16

*ຊາວນີໄຟຜູ້ທີ່ເຊື່ອຊາມູເອນໄດ້ຮັບບັບຕິສະມາໂດຍນີໄຟ—ຊາມູເອນບໍ່ສາມາດຖືກຂ້າໂດຍລູກທະນູ ແລະ ກ້ອນຫີນຂອງຊາວນີໄຟທີ່ບໍ່ກັບໃຈ—ບາງຄົນເຮັດໃຈແຂງກະດ້າງ, ແລະ ບາງຄົນໄດ້ເຫັນເຫລົ່າທູດ—ພວກທີ່ບໍ່ເຊື່ອເວົ້າວ່າມັນບໍ່ມີເຫດຜົນເລີຍທີ່ຈະເຊື່ອໃນພຣະຄຣິດ ແລະ ການສະເດັດມາຂອງພຣະອົງໃນເຢຣູຊາເລັມ. ປະມານ 6–1 ປີ ກ່ອນ ຄ.ສ.*

1 ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນ
ຄື ມັນມີຄົນ ເປັນຈຳນວນຫລວງຫລາຍທີ່
ໄດ້ຍິນຄຳເວົ້າຂອງຊາມູເອນຄົນເລມັນຄົນ
ນີ້ ຊຶ່ງໄດ້ເວົ້າຢູ່ເທິງກຳແພງເມືອງ. ແລະ
ຫລາຍຕໍ່ຫລາຍຄົນທີ່ເຊື່ອໃນຄຳເວົ້າຂອງ
ເພິ່ນ ໄດ້ອອກໄປຊອກຫານີໄຟ; ແລະ ເມື່ອ
ພວກເຂົາອອກໄປ ແລະ ພົບເພິ່ນແລ້ວ
ພວກເຂົາໄດ້ສາລະພາບບາບຂອງພວກ
ເຂົາຕໍ່ເພິ່ນ ແລະ ບໍ່ໄດ້ປະຕິເສດບາບນັ້ນ,
ໂດຍປາດຖະໜາທີ່ຈະຮັບບັບຕິສະມາໄວ້
ກັບພຣະຜູ້ເປັນເຈົ້າ.
2 ແຕ່ຫລາຍຕໍ່ຫລາຍຄົນທີ່ບໍ່ເຊື່ອໃນຄຳ
ເວົ້າຂອງຊາມູເອນໄດ້ຄຽດແຄ້ນໃຫ້ເພິ່ນ;
ແລະ ພວກເຂົາໄດ້ແກວ່ງກ້ອນຫີນໄປໃສ່
ເພິ່ນຢູ່ເທິງກຳແພງ, ແລະ ຫລາຍຄົນໄດ້
ຍິງທະນູໄປໃສ່ເພິ່ນນຳອີກໃນເວລາທີ່ເພິ່ນ
ກຳລັງຢືນຢູ່ເທິງກຳແພງນັ້ນ, ແຕ່ພຣະວິນ
ຍານຂອງພຣະຜູ້ເປັນເຈົ້າສະຖິດຢູ່ກັບ
ເພິ່ນ, ເຖິງຂະໜາດທີ່ພວກເຂົາບໍ່ສາມາດ
ແກວ່ງກ້ອນຫີນ ແລະ ຍິງທະນູໄປຖືກເພິ່ນ.
3 ບັດນີ້ເມື່ອພວກເຂົາເຫັນວ່າ ພວກເຂົາ
ແຕະຕ້ອງເພິ່ນບໍ່ໄດ້, ຫລາຍຄົນຕື່ມອີກໄດ້
ເຊື່ອໃນຄຳເວົ້າຂອງເພິ່ນ ເຖິງຂະໜາດ
ທີ່ພວກເຂົາໄດ້ອອກໄປຫານີໄຟເພື່ອຮັບ
ບັບຕິສະມາ.
4 ເພາະ ຈົ່ງ ເບິ່ງ, ນີໄຟ ກຳ ລັງ ໃຫ້ ບັບຕິ
ສະມາຢູ່, ແລະ ທຳນາຍ, ແລະ ສັ່ງສອນ,
ແລະ ປ່າວປະກາດການກັບໃຈແກ່ຜູ້ຄົນ,
ແລະ ສະແດງເຄື່ອງໝາຍ ແລະ ການແປກ
ປະຫລາດຕ່າງໆ, ແລະ ເຮັດ [ກ]ສິ່ງມະຫັດ
ສະຈັນໃນບັນດາຜູ້ຄົນ, ເພື່ອພວກເຂົາຈະ

17 *ກ* ຣລມ 13:6–10.

**16** 4 *ກ* ຄມພ ມະຫັດສະຈັນ, ການມະຫັດສະຈັນ.

ໄດ້ຮູ້ຈັກວ່າ ພຣະຄຣິດຈະສະເດັດມາ [ຂ]ໃນ
ບໍ່ຊ້າ—
5 ໂດຍ ບອກ ພວກ ເຂົາ ເຖິງ ເລື່ອງ ທີ່ ຈະ
ເກີດຂຶ້ນໃນບໍ່ຊ້າ ເພື່ອພວກເຂົາຈະໄດ້ຮູ້ຈັກ
ແລະ ຈື່ຈຳມັນໄດ້ເມື່ອເຖິງເວລາທີ່ມັນເກີດ
ຂຶ້ນ ວ່າມັນຖືກເຮັດໃຫ້ເປັນທີ່ຮູ້ຈັກແກ່ພວກ
ເຂົາມາກ່ອນແລ້ວ ໂດຍມີເຈດຕະນາທີ່ຈະ
ໃຫ້ພວກເຂົາເຊື່ອຖື; ສະນັ້ນ ຫລາຍຕໍ່ຫລາຍ
ຄົນທີ່ເຊື່ອໃນຄຳເວົ້າຂອງຊາມູເອນ ຈຶ່ງໄດ້
ອອກໄປຫາເພິ່ນເພື່ອຮັບບັບຕິສະມາ ເພາະ
ວ່າພວກ ເຂົາ ມາ ດ້ວຍ ການ ກັບ ໃຈ ແລະ
ດ້ວຍການສາລະພາບບາບຂອງພວກເຂົາ.
6 ແຕ່ວ່າ ຄົນ ສ່ວນ ຫລາຍ ບໍ່ ເຊື່ອ ໃນ ຄຳ
ເວົ້າຂອງຊາມູເອນ; ສະນັ້ນ ເມື່ອພວກເຂົາ
ເຫັນວ່າກ້ອນຫີນ ແລະ ລູກທະນູຂອງພວກ
ເຂົາ ແຕະ ຕ້ອງ ເພິ່ນ ບໍ່ ໄດ້, ພວກ ເຂົາ ຈຶ່ງ
ຮ້ອງບອກນາຍທະຫານຂອງພວກເຂົາ, ມີ
ຄວາມວ່າ: ຈັບຊາຍຜູ້ນີ້ແລ້ວມັດລາວໄວ້,
ເພາະຈົ່ງເບິ່ງ ລາວຖືກຜີສິງ; ແລະ ເພາະ
ອຳນາດຂອງຜີທີ່ຢູ່ກັບລາວ, ພວກເຮົາຈຶ່ງ
ແກວ່ງກ້ອນຫີນ ແລະ ຍິງທະນູໄປໃສ່ລາວ
ບໍ່ຖືກ; ສະນັ້ນ ຈົ່ງຈັບລາວ ແລະ ມັດລາວ
ໄວ້, ແລະ ເອົາລາວໄປ.
7 ແລະ ເວລາທີ່ພວກນາຍທະຫານອອກ
ໄປເພື່ອຈະຈັບເພິ່ນ, ຈົ່ງເບິ່ງ, ເພິ່ນໄດ້ກະ
ໂດດ ລົງ ຈາກ ກຳ ແພງ ເມືອງ ແລະ ໄດ້ໜີ
ອອກຈາກແຜ່ນດິນຂອງພວກເຂົາໄປ, ແທ້
ຈິງແລ້ວ, ເຖິງແມ່ນໄປຫາບ້ານເມືອງຂອງ
ເພິ່ນ, ແລະ ເລີ່ມຕົ້ນສັ່ງສອນ ແລະ ທຳນາຍ
ຢູ່ໃນບັນດາຜູ້ຄົນຂອງເພິ່ນເອງ.
8 ແລະ ຈົ່ງເບິ່ງ, ບໍ່ມີຜູ້ໃດໃນບັນດາຊາວ
ນີໄຟໄດ້ຍິນເລື່ອງລາວຂອງເພິ່ນອີກ; ແລະ
ການງານຂອງຜູ້ຄົນເປັນໄປດັ່ງນັ້ນ.
9 ແລະ ປີທີ ແປດ ສິບ ຫົກແຫ່ງການປົກ
ຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້
ສິ້ນສຸດລົງດັ່ງນີ້.
10 ແ ລ ະ ປີ ທີ ແປດ ສິບ ເຈັດ ແຫ່ງ ການ
ປົກຄອງຂອງຜູ້ຕັດສິນກໍໄດ້ສິ້ນສຸດລົງດັ່ງ
ນີ້ອີກ, ຜູ້ຄົນ ສ່ວນ ຫລາຍ ຍັງຢູ່ ໃນ ຄວາມ
ທະນົງຕົວ ແລະ ຢູ່ໃນຄວາມຊົ່ວຮ້າຍຂອງ
ພວກເຂົາ, ແລະ ຄົນສ່ວນນ້ອຍໄດ້ດຳເນີນ
ຊີວິດໄປຢ່າງຮອບຄອບຫລາຍຂຶ້ນຕໍ່ພຣະ
ພັກຂອງພຣະເຈົ້າ.
11 ແລະ ສະພາບເຊັ່ນນີ້ກໍເປັນໄປໃນປີທີ
ແປດສິບແປດແຫ່ງການປົກຄອງຂອງຜູ້ຕັດ
ສິນຄືກັນ.
12 ແລະ ມັນ ມີ ການ ປ່ຽນ ແປງ ພຽງ ເລັກ
ນ້ອຍ ໃນ ການ ງານ ຂອງ ຜູ້ຄົນ ນອກ ຈາກ ຜູ້
ຄົນ ເລີ່ມ ແຂງກະດ້າງຫລາຍ ຂຶ້ນ ໃນ ຄວາມ
ຊົ່ວ ຮ້າຍ ແລະ ເຮັດສິ່ງ ທີ່ກົງກັນຂ້າມກັບ
ພຣະບັນຍັດຂອງພຣະເຈົ້າຫລາຍຂຶ້ນ, ໃນ
ປີທີແປດສິບເກົ້າແຫ່ງການປົກຄອງຂອງຜູ້
ຕັດສິນ.
13 ແຕ່ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ໃນ ປີ ທີ
ເກົ້າ ສິບ ແຫ່ງການປົກຄອງຂອງຜູ້ຕັດສິນ,
ມັນມີ [ກ]ເຄື່ອງໝາຍສຳຄັນ ແລະ ການແປກ
ປະຫລາດປະກົດຂຶ້ນ ແກ່ຜູ້ຄົນ; ແລະ ຄຳ
ເວົ້າຂອງສາດສະດາທັງຫລາຍ [ຂ]ເລີ່ມເປັນ
ຈິງຂຶ້ນມາ.
14 ແລະ [ກ]ທູດ ໄດ້ ມາ ປະກົດ ແກ່ ມະນຸດ,
ແລະ ນັກປາດ, ແລະ ໄດ້ປະກາດຂ່າວອັນ
ໜ້າ ຊື່ນ ຊົມ ແຫ່ງ ຄວາມ ປິຕິ ຍິນ ດີ ອັນ ຍິ່ງ
ໃຫຍ່ແກ່ພວກເຂົາ; ດັ່ງນັ້ນ ໃນປີນີ້ຂໍ້ຄວາມ
ພຣະຄຳພີຈຶ່ງເລີ່ມສຳເລັດ.
15 ເຖິງ ຢ່າງ ໃດ ກໍ ຕາມ, ຜູ້ຄົນ ຍິ່ງ ເລີ່ມ
ເຮັດ ໃຈ ແຂງກະດ້າງ ຫລາຍ ຂຶ້ນ, ທຸກຄົນ
ນອກ ຈາກ ຜູ້ທີ່ມີຄວາມ ເຊື່ອ ຫລາຍ ທີ່ສຸດ,
ທັງ ຊາວ ນີ ໄຟ ແລະ ຊາວ ເລມັນ ນຳ ອີກ,

4 *ຂ* ຮລມ 14:2. 13 *ກ* 3 ນຟ 1:4.
*ຂ* ຮລມ 14:3–7. 14 *ກ* ແອວ 13:26.
15 *ກ* ອຊຢ 5:21.

ແລະ ເລີ່ມເຊື່ອຖືກຳລັງຂອງຕົນເອງ ແລະ
ປັນຍາ [ກ]ຂອງຕົນເອງ, ໂດຍກ່າວວ່າ:
16 ບາງສິ່ງ ໃນບັນດາຫລາຍ ສິ່ງພວກ
ເຂົາອາດເດົາຖືກ; ແຕ່ຈົ່ງເບິ່ງ, ພວກເຮົາ
ຮູ້ວ່າວຽກງານທີ່ຍິ່ງໃຫຍ່ ແລະ ໜ້າອັດສະ
ຈັນທັງໝົດທີ່ເວົ້າເຖິງຈະບັງເກີດຂຶ້ນບໍ່ໄດ້.
17 ແລະ ພວກເຂົາ ເລີ່ມ ຫາ ເຫດ ຜົນ
ແລະ ໂຕ້ຖຽງກັນໃນບັນດາພວກເຂົາເອງ,
ມີຄວາມວ່າ:
18 ຄືມັນ [ກ]ບໍ່ມີເຫດຜົນທີ່ຄົນຢ່າງພຣະ
ຄຣິດຈະສະເດັດມາ; ຖ້າເປັນເຊັ່ນນັ້ນແທ້
ແລະ ວ່າພຣະອົງເປັນພຣະບຸດຂອງພຣະ
ເຈົ້າ ແລະ ເປັນພຣະບິດາຂອງສະຫວັນ
ແລະ ຂອງແຜ່ນດິນໂລກ ດັ່ງທີ່ເວົ້າເຖິງ,
ເປັນດ້ວຍເຫດໃດພຣະອົງຈຶ່ງຈະບໍ່ສະເດັດ
ມາຫາພວກເຮົາເຊັ່ນດຽວກັບທີ່ພຣະອົງຈະ
ສະເດັດມາຫາຄົນທັງຫລາຍຊຶ່ງຈະຢູ່ທີ່ເຢຣູ
ຊາເລັມ?
19 ແທ້ຈິງແລ້ວ, ເປັນດ້ວຍເຫດໃດພຣະ
ອົງຈຶ່ງຈະບໍ່ສະເດັດມາຫາແຜ່ນດິນນີ້ ເຊັ່ນ
ດຽວກັບທີ່ພຣະອົງຈະສະເດັດມາສູ່ແຜ່ນ
ດິນເຢຣູຊາເລັມ?
20 ແຕ່ ຈົ່ງ ເບິ່ງ, ພວກ ເຮົາ ຮູ້ ວ່າ ນີ້ ເປັນ
[ກ]ຮີດຄອງປະເພນີອັນຊົ່ວຮ້າຍ ຊຶ່ງຖືກມອບ
ໃຫ້ຕໍ່ໆກັນມາຈົນເຖິງພວກເຮົາ ໂດຍບັນ
ພະບຸລຸດຂອງພວກເຮົາ, ເພື່ອໃຫ້ພວກເຮົາ
ເຊື່ອໃນສິ່ງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນ
ຊຶ່ງຈະເກີດຂຶ້ນ ແຕ່ບໍ່ແມ່ນໃນບັນດາພວກ
ເຮົາ, ແຕ່ໃນແຜ່ນດິນທີ່ຢູ່ຫ່າງໄກ ແຜ່ນດິນ
ຊຶ່ງພວກເຮົາບໍ່ຮູ້ຈັກ; ສະນັ້ນພວກເຂົາຈະ
ສາມາດເຮັດໃຫ້ພວກເຮົາຢູ່ໃນຄວາມໂງ່
ຈ້າລ້າຫລັງ, ເພາະວ່າພວກເຮົາຈະບໍ່ສາ
ມາດເປັນ [ຂ]ພະຍານດ້ວຍຕາຂອງພວກເຮົາ
ເອງວ່າ ມັນເປັນຄວາມຈິງ.
21 ແລະ ໂດຍເລ່ຫລ່ຽມ ແລະ ຄວາມລຶກ
ລັບຂອງມານຮ້າຍ, ພວກເຂົາຈະເຮັດການ
ລຶກລັບອັນໃຫຍ່ຫລວງບາງຢ່າງ ຊຶ່ງພວກ
ເຮົາບໍ່ເຂົ້າໃຈ, ຊຶ່ງຈະເຮັດໃຫ້ພວກເຮົາລົງ
ໄປເປັນຂ້າໃຊ້ຂອງຄຳເວົ້າຂອງພວກເຂົາ,
ແລະ ເປັນຂ້າໃຊ້ຂອງພວກເຂົານຳອີກ,
ເພາະວ່າພວກເຮົາຕ້ອງເພິ່ງພວກເຂົາໃຫ້
ສິດສອນພຣະຄຳໃຫ້ແກ່ພວກເຮົາ; ແລະ
ພວກເຂົາຈະເຮັດໃຫ້ພວກເຮົາຢູ່ໃນຄວາມ
ໂງ່ຈ້າດັ່ງນີ້ ຖ້າຫາກພວກເຮົາຍອມມອບ
ຕົວໃຫ້ກັບພວກເຂົາຕະຫລອດວັນເວລາ
ຂອງຊີວິດພວກເຮົາ.
22 ແລະ ມີອີກຫລາຍເລື່ອງທີ່ຜູ້ຄົນໄດ້
ຄິດຂຶ້ນມາເອງຢູ່ໃນໃຈຂອງພວກເຂົາ,
ຊຶ່ງເປັນເລື່ອງໂງ່ ແລະ [ກ]ບໍ່ມີປະໂຫຍດ;
ແລະ ພວກເຂົາວຸ້ນວາຍໃຈຫລາຍ, ເພາະ
ຊາຕານໄດ້ຍຸຍົງໃຫ້ພວກເຂົາເຮັດຄວາມ
ຊົ່ວຮ້າຍຢູ່ຕະຫລອດເວລາ; ແທ້ຈິງແລ້ວ,
ມັນໄດ້ທ່ອງທ່ຽວໄປມາແຜ່ຂ່າວລື ແລະ
ການຂັດແຍ້ງທົ່ວຜືນແຜ່ນດິນ ເພື່ອມັນຈະ
ໄດ້ເຮັດໃຫ້ໃຈຂອງຜູ້ຄົນແຂງກະດ້າງຕໍ່ສິ່ງ
ທີ່ດີ ແລະ ຕໍ່ສິ່ງທີ່ຈະມາເຖິງ.
23 ແລະ ທັງໆທີ່ເຄື່ອງໝາຍ ແລະ ການ
ແປກປະຫລາດໄດ້ເກີດຂຶ້ນໃນບັນດາຜູ້
ຄົນຂອງພຣະຜູ້ເປັນເຈົ້າ, ແລະ ສິ່ງມະຫັດ
ສະຈັນຫລາຍຢ່າງຊຶ່ງຄົນເຫລົ່ານັ້ນໄດ້ເຮັດ
ຂຶ້ນ, ຊາຕານກໍຍັງມີອຳນາດອັນຍິ່ງໃຫຍ່
ເໜືອໃຈຂອງຜູ້ຄົນທົ່ວຜືນແຜ່ນດິນຢູ່.
24 ແລະ ປີທີເກົ້າສິບແຫ່ງການປົກຄອງ
ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນ
ສຸດລົງດັ່ງນີ້.
25 ແລະ ໜັງສືຮີລາມັນ, ຕາມບັນທຶກ
ຂອງຮີລາມັນ ຜູ້ເປັນລູກຊາຍຂອງຮີລາ
ມັນກໍໄດ້ຈົບລົງດັ່ງນີ້.

18 ກ ແອວ 30:12–13.
20 ກ ຄມພ ປະເພນີ.
ຂ ອທ 12:5–6, 19.
22 ກ ຄມພ ອວດອົ່ງ,
ຄວາມອວດອົ່ງ.

# ນີໄຟສະບັບທີສາມ
# ໜັງສືນີໄຟ

**ລູກຊາຍຂອງນີໄຟ, ຜູ້ເປັນລູກຊາຍຂອງຮີລາມັນ**

ແລະ ຮີລາມັນເປັນລູກຊາຍຂອງຮີລາມັນ, ຜູ້ເປັນລູກຊາຍຂອງແອວມາ, ຜູ້ເປັນລູກຊາຍຂອງແອວມາ, ໂດຍເປັນຜູ້ສືບເຊື້ອສາຍຂອງນີໄຟ ຜູ້ເປັນລູກຊາຍຂອງລີໄຮ, ຜູ້ທີ່ໄດ້ອອກມາຈາກເຢຣູຊາເລັມໃນປີທຳອິດແຫ່ງການປົກຄອງຂອງເຊເດກີຢາກະສັດຂອງຊາວຢູດາ.

## ບົດທີ 1

*ນີໄຟຜູ້ເປັນລູກຊາຍຂອງຮີລາມັນອອກຈາກແຜ່ນດິນໄປ, ແລະ ນີໄຟລູກຊາຍຂອງເພິ່ນຮັກສາແຜ່ນຈາລຶກໄວ້—ເຖິງແມ່ນເຄື່ອງໝາຍ ແລະ ການແປກປະຫລາດປະກົດຂຶ້ນຢູ່ທົ່ວໄປ, ແຕ່ຄົນຊົ່ວຍັງວາງແຜນທີ່ຈະຂ້າຄົນຊອບທຳ—ຄືນແຫ່ງການກຳເນີດຂອງພຣະຄຣິດມາເຖິງ—ເຄື່ອງໝາຍຖືກມອບໃຫ້ ແລະ ດາວດວງໃໝ່ປະກົດຂຶ້ນ—ການເວົ້າຕົວະ ແລະ ການຫລອກລວງເພີ່ມທະວີຂຶ້ນ, ແລະ ພັກແກດີອານທັນໄດ້ຂ້າຄົນຢ່າງຫລວງຫລາຍ. ປະມານ ຄ.ສ. 1–4.*

1 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ປີທີເກົ້າສິບເອັດໄດ້ຜ່ານໄປ ແລະ ມັນເປັນ [ກ]ຫົກຮ້ອຍປີນັບຕັ້ງແຕ່ເວລາທີ່ລີໄຮມາຈາກເຢຣູຊາເລັມ; ແລະ ມັນເປັນປີທີ່ເລໂຄນີອັດເປັນຫົວໜ້າຜູ້ຕັດສິນ ແລະ ເປັນຜູ້ປົກຄອງດູແລແຜ່ນດິນ.

2 ແລະ ນີໄຟລູກຊາຍຂອງຮີລາມັນໄດ້ອອກຈາກແຜ່ນດິນເຊຣາເຮັມລາໄປ, ໂດຍທີ່ໄດ້ມອບໝາຍໜ້າທີ່ໃຫ້ແກ່ [ກ]ນີໄຟຜູ້ເປັນລູກຊາຍກົກຂອງເພິ່ນໃຫ້ເປັນຜູ້ຮັກສາ [ຂ]ແຜ່ນຈາລຶກທອງເຫລືອງ ແລະ ບັນທຶກທັງໝົດທີ່ໄດ້ຮັບການຮັກສາມາ, ແລະ ສິ່ງທັງໝົດຊຶ່ງໄດ້ຮັບການຮັກສາໄວ້ໃຫ້ສັກສິດນັບຕັ້ງແຕ່ລີໄຮອອກຈາກເຢຣູຊາເລັມ.

3 ແລ້ວເພິ່ນໄດ້ອອກຈາກແຜ່ນດິນໄປ, ແລະ ບໍ່ມີໃຜຮູ້ວ່າເພິ່ນໄປຫາ [ກ]ບ່ອນໃດ, ແລະ ນີໄຟຜູ້ເປັນລູກຊາຍຂອງເພິ່ນກໍໄດ້ຮັກສາບັນທຶກແທນເພິ່ນ, ແທ້ຈິງແລ້ວ, ບັນທຶກຂອງຜູ້ຄົນພວກນີ້.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຕົ້ນປີທີເກົ້າສິບສອງ, ຈົ່ງເບິ່ງ, ຄຳທຳນາຍຂອງສາດສະດາເລີ່ມຈະສຳເລັດໂດຍສົມບູນຍິ່ງຂຶ້ນ; ເພາະມັນເລີ່ມມີເຄື່ອງໝາຍສຳຄັນ ແລະ ສິ່ງມະຫັດສະຈັນເກີດຂຶ້ນໃນບັນດາຜູ້ຄົນ.

5 ແຕ່ມີບາງຄົນເລີ່ມກ່າວວ່າ ເວລາໄດ້ຜ່ານພົ້ນໄປແລ້ວສຳລັບຄຳຊຶ່ງຊາມູເອນຊາວເລມັນ [ກ]ເວົ້າໄວ້ວ່າ ຈະເກີດເປັນຈິງ.

6 ແລະ ພວກເຂົາເລີ່ມສະແດງຄວາມປິຕິຍິນດີໃສ່ພີ່ນ້ອງຂອງເຂົາ, ໂດຍກ່າວວ່າ: ຈົ່ງເບິ່ງ ເວລາໄດ້ຜ່ານພົ້ນໄປແລ້ວ, ແລະ ຄຳເວົ້າຂອງຊາມູເອນບໍ່ເກີດເປັນຈິງ;

**1** 1 *ກ* 2 ນຟ 25:19.
2 *ກ* ຄມພ ນີໄຟ, ລູກຊາຍຂອງນີໄຟ, ລູກຊາຍຂອງຮີລາມັນ.
*ຂ* ແອວ 37:3–5.
3 *ກ* 3 ນຟ 2:9.
5 *ກ* ຮລມ 14:2–4.

ສະນັ້ນ, ຄວາມປິຕິຍິນດີ ແລະ ສັດທາຂອງ
ພວກທ່ານທີ່ມີຕໍ່ສິ່ງນີ້ກໍບໍ່ມີປະໂຫຍດ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ຮ້ອງປ່າວໄປຕະຫລອດທົ່ວແຜ່ນ
ດິນ; ແລະ ຜູ້ຄົນທີ່ເຊື່ອ ເລີ່ມເສົ້າສະຫລົດ
ໃຈຫລາຍທີ່ສຸດ ເພາະຢ້ານໂດຍທາງໃດ
ທາງໜຶ່ງສິ່ງທີ່ເວົ້າໄວ້ຈະບໍ່ເກີດຂຶ້ນ.
8 ແຕ່ຈົ່ງເບິ່ງ, ຜູ້ຄົນທີ່ເຊື່ອໄດ້ລໍຖ້າຢູ່ຢ່າງ
ຈົດຈໍ່ສຳລັບມື້ນັ້ນ ແລະ ຄືນນັ້ນ ແລະ ມື້ນັ້ນ
ຊຶ່ງຈະເປັນມື້ດຽວກັນຄືກັບວ່າບໍ່ມີກາງຄືນ,
ເພື່ອພວກເຂົາຈະໄດ້ຮູ້ວ່າ ສັດທາຂອງ
ພວກເຂົາມີປະໂຫຍດ.
9 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ມີມື້
ໜຶ່ງທີ່ພວກທີ່ບໍ່ເຊື່ອຕັ້ງໄວ້ ເພື່ອທຸກຄົນທີ່
ເຊື່ອໃນປະເພນີເຫລົ່ານັ້ນຈະ [ກ]ຖືກຂ້າ ຖ້າ
ຫາກເຄື່ອງໝາຍຊຶ່ງສາດສະດາຊາມູເອນ
ໃຫ້ໄວ້ບໍ່ເກີດເປັນຈິງ.
10 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ນີໄຟຜູ້ເປັນລູກຊາຍຂອງນີໄຟເຫັນຄວາມ
ຊົ່ວຮ້າຍນີ້ຂອງຜູ້ຄົນຂອງເພິ່ນ, ໃຈຂອງ
ເພິ່ນກໍເສົ້າສະຫລົດຢ່າງຍິ່ງ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເພິ່ນໄດ້ອອກໄປ ແລະ ຂາບລົງຢູ່ກັບພື້ນ
ດິນ, ແລະ ຮ້ອງທູນຕໍ່ພຣະເຈົ້າຂອງເພິ່ນ
ຢ່າງສຸດກຳລັງເພື່ອຜູ້ຄົນຂອງເພິ່ນ, ແທ້ຈິງ
ແລ້ວ, ເພື່ອພວກທີ່ກຳລັງຈະຖືກທຳລາຍ
ເພາະສັດທາຂອງພວກເຂົາໃນຮີດຄອງປະ
ເພນີຂອງບັນພະບຸລຸດຂອງພວກເຂົາ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເພິ່ນໄດ້ຮ້ອງຫາພຣະຜູ້ເປັນເຈົ້າຢ່າງສຸດ
ກຳລັງ [ກ]ໝົດມື້ນັ້ນ; ແລະ ຈົ່ງເບິ່ງ, ສຸລະ
ສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງເພິ່ນ,
ມີຄວາມວ່າ:
13 ຈົ່ງ ເງີຍ ໜ້າ ແລະ ເບີກ ບານ ເຖີດ;
ເພາະຈົ່ງເບິ່ງ, ເວລາໃກ້ເຂົ້າມາເຖິງແລ້ວ,
ແລະ ໃນຄືນນີ້ເຄື່ອງໝາຍຈະປະກົດຂຶ້ນ,
ແລະ ໃນ [ກ]ມື້ອື່ນ ເຮົາຈະເຂົ້າມາໃນໂລກ
ນີ້, ເພື່ອສະແດງແກ່ໂລກວ່າ ເຮົາຈະເຮັດ
ໃຫ້ທຸກສິ່ງທຸກຢ່າງ ຊຶ່ງເຮົາ [ຂ]ເວົ້າໄວ້ໂດຍ
ປາກຂອງສາດສະດາຜູ້ບໍລິສຸດຂອງເຮົາສຳ
ເລັດ.
14 ຈົ່ງເບິ່ງ, ເຮົາຈະ [ກ]ມາຫາຜູ້ຄົນຂອງ
ເຮົາ ເອງ, ເພື່ອກະທຳໃຫ້ທຸກສິ່ງທຸກຢ່າງ
[ຂ]ສຳເລັດ ຊຶ່ງ ເຮົາໄດ້ກະທຳໃຫ້ເປັນທີ່ຮູ້
ຈັກແກ່ລູກຫລານມະນຸດນັບຕັ້ງແຕ່ [ຄ]ການ
ວາງຮາກຖານຂອງໂລກ, ແລະ ເພື່ອກະ
ທຳຕາມພຣະປະສົງຂອງ [ງ]ທັງສອງພຣະ
ອົງ ພຣະບິດາ ແລະ ຂອງພຣະບຸດ—ຂອງ
ພຣະບິດາເພາະເຮົາ, ແລະ ຂອງພຣະບຸດ
ເພາະເນື້ອໜັງຂອງເຮົາ. ແລະ ຈົ່ງເບິ່ງ,
ເວລາໃກ້ເຂົ້າມາເຖິງແລ້ວ, ແລະ ຄືນນີ້
ເຄື່ອງໝາຍຈະປະກົດຂຶ້ນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຄຳທີ່ກ່າວໄວ້ກັບນີໄຟນັ້ນສຳເລັດ
ແລ້ວ, ດັ່ງທີ່ກ່າວໄວ້; ເພາະຈົ່ງເບິ່ງ, ເວລາ
ດວງອາທິດຕົກແລ້ວ ມັນ [ກ]ບໍ່ມີຄວາມມືດ
ເລີຍ; ແລະ ຜູ້ຄົນເລີ່ມແປກປະຫລາດໃຈ
ເພາະວ່າມັນບໍ່ມີຄວາມມືດໃນຕອນກາງ
ຄືນເລີຍ.
16 ແລະ ມີຄົນຢ່າງຫລວງຫລາຍຜູ້ບໍ່
ເຊື່ອຄຳເວົ້າຂອງສາດສະດາໄດ້ [ກ]ລົ້ມລົງຢູ່
ກັບພື້ນດິນ ແລະ ເປັນຄືກັນກັບຕາຍແລ້ວ,

9 *ກ* ຄມພ ຕາຍເພາະ ຄວາມເຊື່ອ, ການຕາຍ ເພາະຄວາມເຊື່ອ.
12 *ກ* ອນ 1:4; ແອວ 5:46.
13 *ກ* ລກ 2:10–11.
*ຂ* ຄມພ ພຣະເຢຊູຄຣິດ— ການທຳນາຍກ່ຽວກັບ ການກຳເນີດ ແລະ ການສິ້ນພຣະຊົນຂອງ ພຣະເຢຊູຄຣິດ.
14 *ກ* ຢຮ 1:11.
*ຂ* ມທ 5:17–18.
*ຄ* ແອວ 42:26.
*ງ* ຄພ 93:3–4.
15 *ກ* ຮລມ 14:3.
16 *ກ* ຮລມ 14:7.

ເພາະພວກເຂົາຮູ້ວ່າ [ຂ]ແຜນການທຳລາຍ
ອັນໃຫຍ່ຫລວງທີ່ພວກເຂົາວາງໄວ້ສຳລັບ
ຄົນທີ່ເຊື່ອໃນຄຳເວົ້າຂອງສາດສະດາລົ້ມ
ເຫລວແລ້ວ; ເພາະເຄື່ອງໝາຍທີ່ໃຫ້ໄວ້ນັ້ນ
ໄດ້ເກີດຂຶ້ນແລ້ວ.
17 ແລະ ພວກເຂົາເລີ່ມຮູ້ຈັກວ່າ ພຣະ
ບຸດຂອງພຣະເຈົ້າຕ້ອງສະເດັດມາປະກົດ
ໃນບໍ່ດົນ; ແທ້ຈິງແລ້ວ, ໂດຍສະຫລຸບ, ຜູ້
ຄົນທັງໝົດທີ່ຢູ່ທົ່ວແຜ່ນດິນຈາກທາງຕາ
ເວັນຕົກເຖິງທາງຕາເວັນອອກ, ທັງໃນ
ແຜ່ນດິນທາງເໜືອ ແລະ ໃນແຜ່ນດິນທາງ
ໃຕ້, ມີຄວາມແປກໃຈຢ່າງຍິ່ງຈົນວ່າພວກ
ເຂົາລົ້ມລົງຢູ່ກັບພື້ນດິນ.
18 ເພາະພວກເຂົາຮູ້ຈັກວ່າ ສາດສະ
ດາໄດ້ໃຫ້ຖ້ອຍຄຳເຖິງເລື່ອງເຫລົ່ານີ້ມາ
ຫລາຍປີແລ້ວ, ແລະ ເຄື່ອງໝາຍຊຶ່ງໃຫ້ໄວ້
ກໍໄດ້ເກີດຂຶ້ນແລ້ວ; ແລະ ພວກເຂົາເລີ່ມ
ຢ້ານກົວເພາະຄວາມຊົ່ວຮ້າຍ ແລະ ຄວາມ
ບໍ່ເຊື່ອຖືຂອງພວກເຂົາ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ບໍ່ມີຄວາມມືດຕະຫລອດຄືນນັ້ນ, ແຕ່ມັນ
ແຈ້ງຄືກັນກັບຕອນທ່ຽງຂອງກາງເວັນ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ດວງອາ
ທິດໄດ້ຂຶ້ນມາອີກໃນຕອນເຊົ້າຕາມລະບຽບ
ອັນຖືກຕ້ອງຂອງມັນ; ແລະ ພວກເຂົາຈຶ່ງ
ຮູ້ຈັກວ່າ ມັນເປັນມື້ທີ່ພຣະຜູ້ເປັນເຈົ້າຈະ
[ກ]ກຳເນີດ, ເພາະເຄື່ອງໝາຍທີ່ໄດ້ໃຫ້ໄວ້.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື, ແທ້
ຈິງແລ້ວ, ທຸກສິ່ງທຸກຢ່າງ, ທຸກຂໍ້ຄວາມໄດ້
ເກີດຂຶ້ນຕາມຄຳເວົ້າຂອງສາດສະດາ.
21 ແລະ ເຫດການໄດ້ບັງເກີດຂຶ້ນອີກຄື
[ກ]ດາວດວງໃໝ່ໄດ້ປະກົດຂຶ້ນຕາມຄຳທີ່ໄດ້
ໃຫ້ໄວ້ຄືກັນ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື ນັບ
ແຕ່ເວລານັ້ນເປັນຕົ້ນໄປ, ຊາຕານໄດ້ແຜ່
ຂະຫຍາຍຄຳຕົວະອອກໄປໃນບັນດາຜູ້ຄົນ
ເພື່ອເຮັດໃຫ້ໃຈແຂງກະດ້າງ ໂດຍມີເຈດ
ຕະນາທີ່ຈະບໍ່ໃຫ້ພວກເຂົາເຊື່ອໃນເຄື່ອງ
ໝາຍ ແລະ ການແປກປະຫລາດເຫລົ່ານັ້ນ
ຊຶ່ງພວກເຂົາໄດ້ເຫັນມາ; ເຖິງແມ່ນວ່າຈະ
ມີການເວົ້າຕົວະ ແລະ ການຫລອກລວງກໍ
ຕາມແຕ່ຄົນສ່ວນຫລາຍກໍຍັງເຊື່ອ, ແລະ
ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ນີໄຟໄດ້ອອກໄປໃນບັນດາຜູ້ຄົນ, ແລະ ຄົນ
ອື່ນໆອີກຫລາຍຄົນກໍຄືກັນ, ໄດ້ໃຫ້ບັບຕິ
ສະມາໄວ້ກັບການກັບໃຈ, ຊຶ່ງໃນການນັ້ນ
ມີ [ກ]ການປົດບາບຢ່າງຫລວງຫລາຍ. ແລະ
ຜູ້ຄົນເລີ່ມມີສັນຕິສຸກອີກດັ່ງນັ້ນໃນແຜ່ນ
ດິນ.
24 ແລະ ມັນບໍ່ມີການຂັດແຍ້ງກັນເລີຍ,
ນອກຈາກຄົນຈຳນວນບໍ່ເທົ່າໃດຄົນທີ່ເລີ່ມ
ຕົ້ນສັ່ງສອນ, ໂດຍພະຍາຍາມພິສູດຕາມ
ພຣະຄຳພີວ່າ ມັນບໍ່ [ກ]ຈຳເປັນທີ່ຈະປະຕິ
ບັດຕາມກົດຂອງໂມເຊອີກຕໍ່ໄປ. ບັດນີ້ໃນ
ເລື່ອງນີ້ ພວກເຂົາໄດ້ເຮັດຜິດໂດຍບໍ່ເຂົ້າ
ໃຈພຣະຄຳພີ.
25 ແຕ່ເຫດການໄດ້ບັງເກີດຂຶ້ນຄື ບໍ່ດົນ
ພວກເຂົາກໍໄດ້ປ່ຽນໃຈເຫລື້ອມໃສ, ແລະ
ຍອມຮັບຄວາມຜິດທີ່ພວກເຂົາຕົກຢູ່,
ເພາະມັນໄດ້ເຮັດໃຫ້ເປັນທີ່ຮູ້ຈັກແກ່ພວກ
ເຂົາວ່າ ກົດຍັງບໍ່ [ກ]ສົມບູນເທື່ອ, ແລະ ວ່າ
ມັນຈະຕ້ອງສົມບູນທຸກຂໍ້; ແທ້ຈິງແລ້ວ,
ຖ້ອຍຄຳໄດ້ມາເຖິງພວກເຂົາວ່າ ມັນຕ້ອງ
ສົມບູນທັງໝົດ; ແທ້ຈິງແລ້ວ, ວ່າຈຸດໜຶ່ງ
ຫລື ຂີດໜຶ່ງກໍຈະບໍ່ຜ່ານໄປຈົນກວ່າວ່າມັນ

16 ຂ 3 ນຟ 1:9.
19 ກ ລກ 2:1–7.
21 ກ ມທ 2:1–2;
ຣລມ 14:5.
23 ກ ຄມພ ປົດບາບ,
ການປົດບາບ.
24 ກ ແອວ 34:13.
25 ກ ມທ 5:17–18.

ຈະສົມບູນເສຍກ່ອນ; ສະນັ້ນໃນປີດຽວກັນນີ້ ພວກເຂົາຈຶ່ງໄດ້ຖືກນຳມາສູ່ຄວາມຮູ້ເຖິງຄວາມຜິດຂອງພວກເຂົາ ແລະ ໄດ້ [ຂ]ສາລະພາບຄວາມຜິດຂອງພວກເຂົາ.

26 ແລະ ປີທີ ເກົ້າສິບສອງໄດ້ຜ່ານໄປດັ່ງນັ້ນ, ນຳຂ່າວອັນໜ້າຊື່ນຊົມມາເຖິງຜູ້ຄົນ ເພາະເຄື່ອງໝາຍໄດ້ບັງເກີດຂຶ້ນຕາມຄຳທຳນາຍຂອງສາດສະດາຜູ້ບໍລິສຸດທັງຫລາຍ.

27 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີເກົ້າ ສິບສາມໄດ້ຜ່ານໄປດ້ວຍສັນຕິສຸກນອກຈາກພວກ [ກ]ໂຈນແກດີອານທັນເທົ່ານັ້ນຜູ້ທີ່ອາໄສຢູ່ໃນພູຜາປ່າດົງ, ຜູ້ທີ່ມາລົບກວນບ້ານເມືອງ; ເພາະທີ່ໝັ້ນຂອງພວກເຂົາ ແລະ ບ່ອນລີ້ຊ່ອນຕົວຂອງພວກເຂົານັ້ນເຂັ້ມແຂງຫລາຍຈົນວ່າຜູ້ຄົນເອົາຊະນະພວກເຂົາບໍ່ໄດ້; ສະນັ້ນ ພວກເຂົາຈຶ່ງໄດ້ເຮັດການຄາດຕະກຳຢ່າງຫລວງຫລາຍ, ແລະ ໄດ້ທຳການຂ້າຟັນຢ່າງຫລວງຫລາຍໃນບັນດາຜູ້ຄົນ.

28 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທີເກົ້າສິບສີ່ ພວກເຂົາເລີ່ມມີກຳລັງເພີ່ມຂຶ້ນຢ່າງຫລວງຫລາຍ, ເພາະມີຄົນຢ່າງຫລວງຫລາຍທີ່ແຍກອອກໄປຈາກຊາວນີໄຟໜີໄປຫາພວກເຂົາ, ຊຶ່ງໄດ້ເຮັດໃຫ້ເກີດຄວາມເສົ້າສະຫລົດໃຈຫລາຍແກ່ຊາວນີໄຟເຫລົ່ານັ້ນທີ່ຄົງຢູ່ໃນແຜ່ນດິນ.

29 ແລະ ມີເຫດໃຫ້ເກີດຄວາມເສົ້າສະຫລົດໃຈຫລາຍໃນບັນດາຊາວເລມັນນຳອີກ; ເພາະຈົ່ງເບິ່ງ, ພວກເຂົາໄດ້ມີລູກຫລານຢ່າງຫລວງຫລາຍທີ່ໄດ້ເຕີບໂຕ ແລະ ເລີ່ມມີອາຍຸຫລາຍຂຶ້ນ, ຈົນເປັນຕົວຂອງຕົວເອງ, ແລະ ຖືກບາງຄົນຊຶ່ງເປັນ [ກ]ຊາວໂຊຣຳ ຊັກນຳໄປ, ໂດຍການເວົ້າຕົວະ ແລະ ໂດຍການຍົກຍ້ອງຂອງພວກເຂົາ, ເພື່ອໄປເຂົ້າຮ່ວມກັບພວກໂຈນແກດີອານທັນເຫລົ່ານັ້ນ.

30 ແລະ ຊາວເລມັນຈຶ່ງເປັນທຸກເຊັ່ນນັ້ນເໝືອນກັນ, ແລະ ເລີ່ມເສື່ອມລົງໃນສັດທາ ແລະ ຄວາມຊອບທຳຂອງພວກເຂົາ, ເພາະຄວາມຊົ່ວຮ້າຍຂອງຄົນລຸ້ນໃໝ່.

## ບົດທີ 2

*ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງເພີ່ມທະວີຂຶ້ນໃນບັນດາຜູ້ຄົນ—ຊາວນີໄຟ ແລະ ຊາວເລມັນຮ່ວມມືກັນເພື່ອປົກປ້ອງຕົນເອງຈາກພວກໂຈນແກດີອານທັນ—ຊາວເລມັນທີ່ເຫລື້ອມໃສກັບເປັນຄົນຜິວຂາວ ແລະ ຖືກເອີ້ນວ່າຊາວນີໄຟ. ປະມານ ຄ.ສ. 5–16.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີເກົ້າສິບຫ້າກໍໄດ້ຜ່ານໄປຄືກັນ, ແລະ ຜູ້ຄົນເລີ່ມຫລົງລືມເຄື່ອງໝາຍ ແລະ ຄວາມແປກປະຫລາດຊຶ່ງພວກເຂົາເຄີຍໄດ້ຍິນມາ, ແລະ ເລີ່ມແປກໃຈໜ້ອຍລົງກ່ຽວກັບເຄື່ອງໝາຍ ຫລື ການແປກປະຫລາດຈາກສະຫວັນ, ເຖິງຂະໜາດທີ່ພວກເຂົາເລີ່ມແຂງກະດ້າງໃນໃຈ ແລະ ມືດດັບໃນຈິດ, ແລະ ເລີ່ມບໍ່ເຊື່ອທຸກສິ່ງຊຶ່ງພວກເຂົາໄດ້ຍິນ ແລະ ເຫັນມາ—

2 ນຶກຄິດເຖິງສິ່ງທີ່ບໍ່ມີປະໂຫຍດບາງຢ່າງໃນໃຈຂອງພວກເຂົາ ວ່າມະນຸດ ແລະ ອຳນາດຂອງມານເຮັດມັນຂຶ້ນເພື່ອຊັກຈູງ ແລະ [ກ]ຫລອກລວງໃຈຂອງຜູ້ຄົນ; ແລະ ຊາຕານໄດ້ຄອບຄອງໃຈຂອງຜູ້ຄົນອີກ

25 *ຂ* ມຊຍ 26:29.
27 *ກ* ຄມພ ພວກໂຈນແກດີອານທັນ.
29 *ກ* ແອວ 30:59.
**2** 2 *ກ* ຄມພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.

ແລ້ວດັ່ງນັ້ນ, ເຖິງຂະໜາດທີ່ມັນໄດ້ເຮັດ
ໃຫ້ຕາຂອງພວກເຂົາບອດ ແລະ ຊັກນຳ
ພວກເຂົາໄປ ໃຫ້ ເຊື່ອວ່າ ຄຳສອນ ຂອງ
ພຣະຄຣິດເປັນສິ່ງທີ່ໂງ່ຈ້າລ້າຫລັງ ແລະ ບໍ່
ມີປະໂຫຍດ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນ
ເລີ່ມເກັ່ງກ້າຫລາຍຂຶ້ນໃນຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງ; ແລະ ພວກເຂົາ
ບໍ່ເຊື່ອວ່າ ມັນຈະມີເຄື່ອງໝາຍ ຫລື ການ
ແປກ ປະ ຫລາດ ເກີດ ຂຶ້ນ ຕື່ມອີກ; ແລະ
ຊາຕານໄດ້ ᵃໄປຫາທົ່ວທຸກແຫ່ງຫົນຊັກ
ຈູງໃຈຂອງຜູ້ຄົນໄປໂດຍລໍ້ລວງພວກເຂົາ
ແລະ ເປັນເຫດໃຫ້ພວກເຂົາເຮັດຄວາມຊົ່ວ
ຮ້າຍອັນໃຫຍ່ຫລວງໃນແຜ່ນດິນ.
4 ແລະ ປີທີເກົ້າສິບຫົກໄດ້ຜ່ານໄປດັ່ງ
ນັ້ນ; ແລະ ປີທີເກົ້າສິບເຈັດນຳອີກ; ແລະ
ປີທີເກົ້າສິບແປດ ແລະ ປີທີເກົ້າສິບເກົ້ານຳ
ອີກ.
5 ແລະ ໜຶ່ງຮ້ອຍປີໄດ້ຜ່ານໄປ ນັບຕັ້ງ
ແຕ່ ວັນ ເວລາ ຂອງ ᵃໂມ ໄຊ ຢາ, ຜູ້ ເປັນ
ກະສັດຂອງຊາວນີໄຟ.
6 ແລະ ຫົກຮ້ອຍເກົ້າປີໄດ້ຜ່ານໄປ ນັບ
ຕັ້ງແຕ່ລີໄຮອອກຈາກເຢຣູຊາເລັມມາ.
7 ແລະ ເກົ້າປີ ໄດ້ຜ່ານໄປ ນັບຕັ້ງແຕ່
ເວລາທີ່ມີເຄື່ອງໝາຍປະທານໃຫ້, ຊຶ່ງສາດ
ສະດາໄດ້ເວົ້າໄວ້ວ່າ ພຣະຄຣິດຈະສະເດັດ
ມາສູ່ໂລກ.
8 ບັດນີ້ຊາວນີໄຟໄດ້ເລີ່ມນັບເວລາຂອງ
ພວກເຂົານັບຕັ້ງແຕ່ເວລານີ້ເປັນຕົ້ນໄປ
ເລີ່ມຈາກເວລາທີ່ມີເຄື່ອງໝາຍປະທານ
ໃຫ້, ຫລື ນັບຕັ້ງແຕ່ການສະເດັດມາຂອງ
ພຣະຄຣິດ; ສະນັ້ນ, ມັນຈຶ່ງເປັນເວລາພຽງ
ແຕ່ເກົ້າປີຜ່ານໄປ.
9 ແລະ ນີໄຟຜູ້ເປັນບິດາຂອງນີໄຟຜູ້ໄດ້
ຮັບໜ້າທີ່ເພື່ອເກັບແຜ່ນຈາລຶກນັ້ນ, ບໍ່ ᵃໄດ້
ກັບຄືນມາແຜ່ນດິນເຊຣາເຮັມລາອີກ, ແລະ
ບໍ່ມີຜູ້ໃດພົບເຫັນເພິ່ນຢູ່ບ່ອນໃດເລີຍໃນ
ທົ່ວແຜ່ນດິນ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນຍັງຄົງຢູ່ໃນຄວາມຊົ່ວຮ້າຍ, ທັງໆທີ່ມີ
ການສັ່ງສອນ ແລະ ໃຫ້ຄຳທຳນາຍຫລາຍ
ຢ່າງໃນບັນດາພວກເຂົາ; ແລະ ປີທີສິບໄດ້
ຜ່ານໄປດັ່ງນີ້; ແລະ ປີທີສິບເອັດກໍໄດ້ຜ່ານ
ໄປດ້ວຍຄວາມຊົ່ວຮ້າຍນຳອີກ.
11 ແລະ ເຫດການໄດ້ບັງເກີດຂຶ້ນໃນ
ປີທີສິບສາມ ມັນເລີ່ມມີສົງຄາມ ແລະ
ການຂັດແຍ້ງກັນຕະຫລອດທົ່ວແຜ່ນດິນ;
ເພາະວ່າພວກໂຈນແກດີອານທັນກັບມີ
ຈຳນວນຫລວງຫລາຍຂຶ້ນ, ແລະ ໄດ້ຂ້າ
ຜູ້ຄົນຢ່າງຫລວງຫລາຍ, ແລະ ເຮັດໃຫ້
ຫລາຍຫົວເມືອງແປນເປົ່າ ແລະ ໄດ້ຂະ
ຫຍາຍຄວາມຕາຍ ແລະ ການຂ້າຟັນຢ່າງ
ຫລວງຫລາຍທົ່ວແຜ່ນດິນ, ຈົນວ່າມັນເປັນ
ສິ່ງສົມຄວນທີ່ຜູ້ຄົນທັງໝົດ ທັງຊາວນີໄຟ
ແລະ ຊາວເລມັນຈະຈັບອາວຸດຂຶ້ນຕໍ່ສູ້ກັບ
ພວກເຂົາ.
12 ສະນັ້ນ, ຊາວເລມັນທັງໝົດຜູ້ໄດ້ປ່ຽນ
ໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າຈຶ່ງໄດ້
ເຂົ້າສົມທົບກັບຊາວນີໄຟພີ່ນ້ອງຂອງພວກ
ເຂົາ, ແລະ ຖືກບັງຄັບໃຫ້ຈັບອາວຸດຂຶ້ນຕໍ່
ສູ້ກັບໂຈນແກດີອານທັນເຫລົ່ານັ້ນ ເພື່ອ
ຄວາມປອດໄພຂອງຊີວິດຂອງພວກເຂົາ
ແລະ ພວກແມ່ຍິງຂອງພວກເຂົາ ແລະ
ພວກເດັກນ້ອຍຂອງພວກເຂົາ, ແທ້ຈິງ
ແລ້ວ, ແລະ ເພື່ອປົກປັກຮັກສາສິດຂອງ
ພວກເຂົາ, ແລະ ສິດທິພິເສດຂອງສາດ
ສະໜາຈັກຂອງພວກເຂົາ ແລະ ສິດຂອງ
ການນະມັດສະການຂອງພວກເຂົາ, ແລະ

3 *a* ຄພ 10:27. | 5 *a* ມຊຢ 29:46–47. | 9 *a* 3 ນຟ 1:2–3.

ᵍອິດສະ ລະ ພາບ ແລະ ᵉເສ ລີ ພາບ ຂອງ
ພວກເຂົານຳອີກ.
13 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ກ່ອນ ປີ ທີ ສິບ ສາມ ຈະ ຜ່ານ ພົ້ນ ໄປ ຊາວ
ນີໄຟໄດ້ຖືກຄຸກຄາມດ້ວຍການທຳລາຍອັນ
ໃຫຍ່ຫລວງ ຍ້ອນວ່າສົງຄາມເທື່ອນີ້ໂຫດ
ຮ້າຍທາລຸນຫລາຍທີ່ສຸດ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນ ເຫລົ່າ ນັ້ນ ຜູ້ ທີ່ ໄດ້ ເຂົ້າ ມາຮ່ວມກັບ
ຊາວນີໄຟ ໄດ້ຖືກນັບເຂົ້າຢູ່ໃນບັນດາຊາວ
ນີໄຟ;
15 ແລະ ᵍຄຳ ສາບ ແຊ່ງທີ່ ມີ ຢູ່ ກັບ ພວກ
ເຂົາຖືກຖອນອອກໄປ, ແລະ ຜິວໜັງຂອງ
ພວກເຂົາກັບມາ ᵉຂາວຄືກັນກັບຊາວນີໄຟ;
16 ແລະ ພວກຊາຍໜຸ່ມ ແລະ ພວກລູກ
ສາວຂອງພວກເຂົາກັບມາເປັນຄົນຈົບງາມ
ທີ່ສຸດ, ແລະ ພວກເຂົາຖືກນັບເຂົ້າຢູ່ໃນບັນ
ດາຊາວນີໄຟ ແລະ ຖືກເອີ້ນວ່າຊາວນີໄຟ.
ແລະ ປີທີສິບສາມໄດ້ສິ້ນສຸດລົງດັ່ງນີ້.
17 ແລະ ເຫດ ການ ໄດ້ ບັງ ເກີດຂຶ້ນ ໃນ
ຕົ້ນປີທີສິບສີ່, ສົງຄາມລະຫວ່າງພວກໂຈນ
ແລະ ຜູ້ຄົນຂອງນີໄຟໄດ້ດຳເນີນຕໍ່ໄປ ແລະ
ມັນໄດ້ກັບມາຮ້າຍແຮງຫລາຍທີ່ສຸດ; ເຖິງ
ຢ່າງໃດກໍຕາມ, ຜູ້ຄົນຂອງນີໄຟຍັງໄດ້ປຽບ
ພວກໂຈນຢູ່, ເຖິງຂະໜາດທີ່ພວກເຂົາໄດ້
ຂັບ ໄລ່ ພວກ ເຂົາ ອອກ ໄປ ຈາກ ແຜ່ນ ດິນ
ຂອງຕົນ ເຂົ້າໄປໃນພູ ແລະ ບ່ອນລີ້ຊ່ອນ
ຂອງພວກເຂົາ.
18 ແລະ ປີທີສິບສີ່ໄດ້ສິ້ນສຸດລົງດັ່ງນີ້.
ແລະ ໃນປີທີສິບຫ້າ ພວກເຂົາ ໄດ້ຍົກມາ
ຕໍ່ສູ້ກັບ ຜູ້ຄົນຂອງນີໄຟ; ແລະ ເປັນ ຍ້ອນ
ຄວາມຊົ່ວຮ້າຍຂອງຜູ້ຄົນຂອງນີໄຟ, ແລະ
ການ ຂັດ ແຍ້ງ ແລະ ການ ແຕກແຍກກັນ
ຫລາຍຕໍ່ຫລາຍເທື່ອຂອງພວກເຂົາ, ພວກ
ໂຈນແກດີອານທັນຈຶ່ງໄດ້ປຽບພວກເຂົາ.
19 ແລະ ປີທີສິບຫ້າໄດ້ສິ້ນສຸດລົງດັ່ງນີ້,
ແລະ ຜູ້ຄົນໄດ້ຢູ່ໃນສະພາບແຫ່ງຄວາມ
ທຸກຢູ່ດັ່ງນີ້; ແລະ ᵍດາບແຫ່ງຄວາມພິນາດ
ໄດ້ແຂວນຢູ່ເທິງຫົວຂອງພວກເຂົາ, ເຖິງ
ຂະໜາດທີ່ພວກເຂົາຈະຖືກມັນຟາດຟັນ,
ແລະ ນີ້ກໍເພາະຄວາມຊົ່ວຮ້າຍຂອງພວກ
ເຂົາ.

## ບົດທີ 3

*ກິດດີອານໄຮຜູ້ເປັນຫົວໜ້າໂຈນແກດີອານທັນ ສັ່ງ ໃຫ້ ເລ ໂຄນີອັດ ແລະ ຊາວ ນີໄຟ ຍອມຈຳນົນ ແລະ ຍອມມອບແຜ່ນດິນໃຫ້ ພວກ ເຂົາ—ເລ ໂຄນີອັດ ແຕ່ງຕັ້ງກິດກິດໂດໄນຂຶ້ນເປັນຫົວໜ້ານາຍທະຫານຂອງ ກອງທັບ—ຊາວນີໄຟເຕົ້າໂຮມກັນຢູ່ເຊຣາເຮັມລາ ແລະ ແຜ່ນດິນອຸດົມສົມບູນເພື່ອ ປ້ອງກັນຕົວເອງ. ປະມານ ຄ.ສ. 16–18.*

1 ແລະ ບັດ ນີ້ ເຫດ ການ ໄດ້ບັງເກີດຂຶ້ນ
ຄື ໃນປີທີສິບຫົກນັບຕັ້ງແຕ່ການສະເດັດ
ມາຂອງພຣະຄຣິດ, ເລໂຄນີອັດຜູ້ປົກຄອງ
ແຜ່ນ ດິນ ໄດ້ ຮັບ ສານ ຈາກ ຜູ້ ນຳ ແລະ ຜູ້
ປົກຄອງຂອງພວກໂຈນພັກນີ້; ແລະ ນີ້ຄືຂໍ້
ຄວາມທີ່ມີຂຽນໄວ້, ມີຄວາມວ່າ:
2 ເລ ໂຄ ນີ ອັດ ຜູ້ ເປັນ ຫົວໜ້າ ຜູ້ປົກຄອງ
ແຜ່ນດິນທີ່ມີກຽດສູງສົ່ງ, ຈົ່ງເບິ່ງ, ຂ້າພະ
ເຈົ້າຂຽນສານນີ້ມາຫາທ່ານ, ແລະ ຂໍຍ້ອງ
ຍໍທ່ານເປັນຢ່າງສູງ ເພາະຄວາມໝັ້ນຄົງ
ຂອງທ່ານ, ແລະ ຄວາມໝັ້ນຄົງຂອງຜູ້ຄົນ
ຂອງທ່ານນຳອີກໃນການປົກປັກຮັກສາສິ່ງ
ທີ່ພວກທ່ານຄິດວ່າເປັນສິດທິ ແລະ ເສລີ

12ກ ຄມພ ອິດສະລະ, ອິດສະລະພາບ.
ຂ ຄມພ ເສລີພາບ.

15ກ ແອວ 17:15; 23:18.
ຂ 2 ນຟ 5:21; 30:6; ຍຄ 3:8.

19ກ ແອວ 60:29.

ພາບຂອງພວກທ່ານ; ແທ້ຈິງແລ້ວ, ພວກທ່ານຢູ່ໃນຖານະດີຄ້າຍຄືກັບວ່າ ພວກທ່ານໄດ້ຮັບຄວາມອູ້ມຊູໂດຍພຣະຫັດຂອງພຣະເຈົ້າອົງໜຶ່ງ ໃນການປ້ອງກັນເສລີພາບຂອງພວກທ່ານ, ແລະ ຊັບສົມບັດຂອງພວກທ່ານ, ແລະ ປະເທດຂອງພວກທ່ານ, ຫລື ສິ່ງທີ່ພວກທ່ານເອີ້ນເຊັ່ນນັ້ນ.

3 ແລະ ເບິ່ງເປັນໜ້າສົງສານສຳລັບຂ້າພະເຈົ້າເລໂຄນິອັດຜູ້ມີກຽດສູງສຸດ, ທີ່ພວກທ່ານໂງ່ ແລະ ອວດດີທີ່ຄິດວ່າ ພວກທ່ານຈະສາມາດຢືນຕໍ່ສູ້ກັບຄົນກ້າຫານຢ່າງຫລວງຫລາຍຜູ້ທີ່ຢູ່ໃຕ້ບັງຄັບບັນຊາຂອງຂ້າພະເຈົ້າ ຜູ້ຊຶ່ງໃນເວລານີ້ກຳລັງຢືນຈັບອາວຸດ ແລະ ຄອຍຖ້າຄຳສັ່ງຢູ່ດ້ວຍຄວາມຮ້ອນຮົນທີ່ສຸດ—ໃຫ້ຍົກໄປໂຈມຕີຊາວນີໄຟ ແລະ ທຳລາຍພວກເຂົາເສຍ.

4 ແລະ ຂ້າພະເຈົ້າໂດຍທີ່ຮູ້ຈັກດີເຖິງວິນຍານທີ່ບໍ່ຍອມຜ່າຍແພ້ຂອງພວກເຂົາ, ແລະ ໂດຍທີ່ໄດ້ທົດສອບມາແລ້ວໃນສະໜາມຮົບ ແລະ ຮູ້ຈັກດີເຖິງຄວາມກຽດຊັງອັນເປັນນິດຂອງພວກເຂົາທີ່ມີຕໍ່ພວກທ່ານເພາະຄວາມຜິດພາດຫລາຍຢ່າງທີ່ພວກທ່ານໄດ້ກະທຳຕໍ່ພວກເຂົາ, ສະນັ້ນ ຖ້າຫາກພວກເຂົາຍົກລົງມາຕໍ່ສູ້ກັບພວກທ່ານແລ້ວພວກເຂົາຈະມາຢ້ຽມຢາມພວກທ່ານດ້ວຍຄວາມພິນາດຈົນໝົດສິ້ນ.

5 ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ຂຽນສານນີ້ ປະທັບຕາດ້ວຍມືຂອງຂ້າພະເຈົ້າເອງ, ເຫັນແກ່ຄວາມຜາສຸກຂອງພວກທ່ານເພາະຄວາມໝັ້ນຄົງຂອງພວກທ່ານໃນສິ່ງທີ່ພວກທ່ານເຊື່ອວ່າຖືກຕ້ອງ, ແລະ ວິນຍານອັນສູງສັກຂອງພວກທ່ານໃນສະໜາມຮົບ.

6 ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ຂຽນມາຫາທ່ານ ເພື່ອປາດຖະໜາໃຫ້ພວກທ່ານຍອມມອບເມືອງຂອງພວກທ່ານ, ແຜ່ນດິນຂອງພວກທ່ານ, ແລະ ຊັບສົມບັດຂອງພວກທ່ານ, ແທນທີ່ຈະໃຫ້ພວກເຂົາມາຢ້ຽມຢາມພວກທ່ານດ້ວຍດາບ ແລະ ໃຫ້ຄວາມພິນາດນັ້ນມາສູ່ພວກທ່ານ.

7 ຫລື ອີກຄຳໜຶ່ງ ໃຫ້ພວກທ່ານຍອມມອບຕົວໃຫ້ພວກເຮົາເສຍ, ແລະ ເຂົ້າມາຮ່ວມກັບພວກເຮົາ ແລະ ມາຮູ້ຈັກກັບວຽກງານອັນ [ກ]ລຶກລັບຂອງພວກເຮົາ, ແລະ ກັບກາຍເປັນພີ່ນ້ອງຂອງພວກເຮົາ ເພື່ອພວກທ່ານຈະໄດ້ເປັນຄືກັນກັບພວກເຮົາ—ບໍ່ແມ່ນຂ້າທາດຂອງພວກເຮົາ, ແຕ່ເປັນພີ່ນ້ອງ ແລະ ຫຸ້ນສ່ວນໃນເຂົ້າຂອງທັງໝົດຂອງພວກເຮົາ.

8 ແລະ ຈົ່ງເບິ່ງ, ຂ້າພະເຈົ້າຂໍ [ກ]ສາບານກັບພວກທ່ານວ່າ, ຖ້າຫາກພວກທ່ານເຮັດຕາມນີ້ດ້ວຍຄຳສາບານ, ພວກທ່ານຈະບໍ່ຖືກທຳລາຍ; ແຕ່ຖ້າພວກທ່ານບໍ່ຍອມເຮັດຕາມນີ້, ຂ້າພະເຈົ້າຂໍກ່າວຄຳສາບານກັບພວກທ່ານວ່າ, ເດືອນໜ້ານີ້ຂ້າພະເຈົ້າຈະສັ່ງໃຫ້ກອງທັບຂອງຂ້າພະເຈົ້າຍົກທັບລົງມາໂຈມຕີພວກທ່ານ, ແລະ ພວກເຂົາຈະບໍ່ຢັ້ງມື ແລະ ຈະບໍ່ໄວ້ຊີວິດ, ແຕ່ຈະຂ້າພວກທ່ານ, ແລະ ຈະໃຫ້ດາບຟາດຟັນລົງເທິງພວກທ່ານ ຈົນວ່າພວກທ່ານຈະສູນສິ້ນ.

9 ແລະ ຈົ່ງເບິ່ງ, ຂ້າພະເຈົ້າຄືກິດດີອານໄຮ; ແລະ ຂ້າພະເຈົ້າເປັນຜູ້ປົກຄອງ [ກ]ສະມາຄົມລັບແຫ່ງນີ້ຂອງແກດີອານທັນ; ຊຶ່ງສະມາຄົມ ແລະ ວຽກງານຂອງມັນຂ້າພະເຈົ້າຮູ້ວ່າ [ຂ]ດີ; ແລະ ມັນມີມາແຕ່ [ຄ]ເກົ່າກ່ອນ ແລະ ມັນຖືກມອບຕໍ່ໆກັນມາເຖິງພວກເຮົາ.

10 ແລະ ຂ້າພະເຈົ້າໄດ້ຂຽນສານມາຫາ

**3** 7*ກ* ຣລມ 6:22–26.
8*ກ* ອທ 8:13–14.
9*ກ* ຄມພ ການມົ້ວສຸມລັບ.
*ຂ* ແອວ 30:53.
*ຄ* ຣລມ 6:26–30; ມຊ 5:29, 49–52.

ທ່ານ, ເລໂຄນິອັດ, ແລະ ຂ້າພະເຈົ້າຫວັງ
ວ່າ ພວກທ່ານຈະມອບແຜ່ນດິນຂອງພວກ
ທ່ານ, ແລະ ຊັບສົມບັດຂອງພວກທ່ານໃຫ້
ໂດຍບໍ່ມີການເສຍເລືອດເນື້ອ, ເພື່ອຄົນ
ພວກນີ້ຂອງຂ້າພະເຈົ້າຜູ້ທີ່ແຍກອອກໄປ
ຈາກພວກທ່ານເພາະຄວາມຊົ່ວຮ້າຍຂອງ
ພວກທ່ານໃນການຍຶດເອົາສິດທິການປົກ
ຄອງຂອງພວກເຂົາໄປ ຈະໄດ້ຮັບສິດທິ
ແລະ ອຳນາດປົກຄອງຂອງພວກເຂົາຄືນ
ມາ, ແລະ ຖ້າຫາກພວກທ່ານບໍ່ເຮັດຕາມ
ນີ້, ຂ້າພະເຈົ້າຈະແກ້ແຄ້ນຄວາມເສຍຫາຍ
ຂອງພວກເຂົາ. ຂ້າພະເຈົ້າຄື ກິດດີອານ
ໄຮ.
11 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ເວລາເລໂຄນິອັດໄດ້ຮັບສານນີ້ແລ້ວ ເພິ່ນ
ກໍແປກໃຈຢ່າງຍິ່ງເພາະຄວາມອວດດີຂອງ
ກິດດີອານໄຮໃນການຮຽກຮ້ອງຄວາມເປັນ
ເຈົ້າຂອງແຜ່ນດິນຂອງຊາວນີໄຟ ແລະ
ນາບຂູ່ຜູ້ຄົນ ແລະ ຈະແກ້ແຄ້ນຄວາມເສຍ
ຫາຍໃຫ້ຄົນທີ່ບໍ່ໄດ້ຮັບຄວາມເສຍຫາຍ
ນຳອີກ ນອກຈາກພວກເຂົາໄດ້ສ້າງຄວາມ
[ກ]ເສຍຫາຍໃຫ້ແກ່ຕົນເອງ ໂດຍແຍກອອກ
ໄປຫາພວກໂຈນທີ່ຊົ່ວ ແລະ ໜ້າກຽດຊັງ
ເຫລົ່ານັ້ນ.
12 ບັດນີ້ຈົ່ງເບິ່ງ, ເລໂຄນິອັດຜູ້ປົກຄອງ
ຜູ້ນີ້ເປັນຄົນທ່ຽງທຳ, ແລະ ຄຳສັ່ງ ແລະ
ການນາບຂູ່ຂອງ [ກ]ໂຈນບໍ່ໄດ້ເຮັດໃຫ້ເພິ່ນ
ມີຄວາມສະທ້ານຫວັ່ນໄຫວເລີຍ; ສະນັ້ນ
ເພິ່ນຈຶ່ງບໍ່ໄດ້ເຊື່ອຟັງສານຂອງກິດດີອານ
ໄຮ ຜູ້ປົກຄອງຂອງພວກໂຈນເລີຍ, ແຕ່ວ່າ
ເພິ່ນໄດ້ໃຫ້ຜູ້ຄົນຂອງເພິ່ນຮ້ອງທູນຕໍ່ພຣະ
ຜູ້ເປັນເຈົ້າເພື່ອຂໍພະລັງໃນເວລາທີ່ພວກ
ໂຈນຈະຍົກທັບມາໂຈມຕີພວກເຂົາ.
13 ແທ້ຈິງແລ້ວ, ເພິ່ນໄດ້ສົ່ງຂ່າວໄປໃນ
ບັນດາຜູ້ຄົນທັງໝົດ, ວ່າໃຫ້ພວກເຂົາຮວບ
ຮວມພວກແມ່ຍິງຂອງພວກເຂົາ ແລະ ເດັກ
ນ້ອຍຂອງພວກເຂົາ, ຝູງສັດລ້ຽງຂອງພວກ
ເຂົາ ແລະ ຝູງສັດໃຊ້ແຮງງານຂອງພວກ
ເຂົາ, ແລະ ເຂົ້າຂອງທັງໝົດຂອງພວກ
ເຂົາຢູ່ບ່ອນດຽວກັນ, ເວັ້ນເສຍແຕ່ແຜ່ນດິນ
ຂອງພວກເຂົາເທົ່ານັ້ນ.
14 ແລະ ເພິ່ນໄດ້ສັ່ງໃຫ້ສ້າງບ່ອນປ້ອງ
ກັນຂຶ້ນໂດຍຮອບ, ແລະ ໃຫ້ບ່ອນນັ້ນມີກຳ
ລັງຫລາຍທີ່ສຸດ. ແລະ ເພິ່ນໄດ້ໃຫ້ກອງທັບ
ທັງໝົດ ທັງຂອງຊາວນີໄຟ ແລະ ຂອງຊາວ
ເລມັນ ຫລື ຜູ້ຄົນທັງໝົດທີ່ຖືກນັບເຂົ້າຢູ່ໃນ
ບັນດາຊາວນີໄຟມາຕັ້ງປ້ອງກັນພວກເຂົາ
ໂດຍຮອບ ທັງກາງເວັນ ແລະ ກາງຄືນ,
ແລະ ປ້ອງກັນພວກເຂົາ ໃຫ້ພົ້ນຈາກພວກ
ໂຈນ.
15 ແທ້ຈິງແລ້ວ, ເພິ່ນໄດ້ກ່າວກັບພວກ
ເຂົາວ່າ: ຕາບໃດທີ່ພຣະຜູ້ເປັນເຈົ້າຊົງ
ພຣະຊົນຢູ່ ຖ້າຫາກພວກທ່ານບໍ່ກັບໃຈ
ຈາກຄວາມຊົ່ວຮ້າຍທັງໝົດຂອງພວກທ່ານ
ແລະ ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ແລ້ວ
ພວກທ່ານຈະບໍ່ມີທາງພົ້ນຈາກກຳມືຂອງ
ພວກໂຈນແກດີອານທັນເຫລົ່ານີ້ໄດ້.
16 ແລະ ຄຳເວົ້າ ແລະ ຄຳທຳນາຍຂອງ
ເລໂຄນິອັດນັ້ນຍິ່ງໃຫຍ່ ແລະ ໜ້າອັດສະ
ຈັນຫລາຍ ຈົນເຮັດໃຫ້ຄວາມຢ້ານກົວເກີດ
ກັບຜູ້ຄົນທັງໝົດ; ແລະ ພວກເຂົາໄດ້ພະ
ຍາຍາມທຳຕົວດ້ວຍຄວາມສາມາດຂອງ
ພວກເຂົາທີ່ຈະປະຕິບັດຕາມຄຳຂອງເລໂຄ
ນິອັດ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ເລ
ໂຄນິອັດໄດ້ແຕ່ງຕັ້ງໃຫ້ມີຫົວໜ້ານາຍທະ
ຫານ ເພື່ອຄວບຄຸມກອງທັບທັງໝົດຂອງ
ຊາວນີໄຟ, ເພື່ອຈະໄດ້ບັງຄັບບັນຊາໃນ

11 ກ ຣອມ 14:30. 12 ກ ແອວ 54:5–11; 3 ນຟ 4:7–10.

ເວລາທີ່ພວກໂຈນຈະຍົກທັບລົງມາຈາກ
ຖິ່ນແຫ້ງແລ້ງກັນດານເພື່ອໂຈມຕີພວກ
ເຂົາ.
18 ບັດນີ້ມີການແຕ່ງຕັ້ງຫົວໜ້າໃຫຍ່ທີ່
ສຸດໃນບັນດາຫົວໜ້ານາຍທະຫານທັງໝົດ
ແລະ ຜູ້ບັງຄັບບັນຊາກອງທັບທັງໝົດຂອງ
ຊາວນີໄຟມີຊື່ວ່າ [ກ]ກິດກິດໂດໄນ.
19 ບັດນີ້ມັນເປັນທຳນຽມໃນບັນດາຊາວ
ນີໄຟທັງໝົດທີ່ຈະແຕ່ງຕັ້ງຫົວໜ້ານາຍທະ
ຫານຂອງພວກເຂົາ (ນອກຈາກໃນເວລາ
ແຫ່ງຄວາມຊົ່ວຮ້າຍ) ຈາກຄົນທີ່ມີວິນຍານ
ແຫ່ງການເປີດເຜີຍ ແລະ [ກ]ການທຳນາຍ
ນຳອີກ; ສະນັ້ນ, ກິດກິດໂດໄນຜູ້ນີ້ຈຶ່ງໄດ້
ເປັນສາດສະດາຜູ້ຍິ່ງໃຫຍ່ໃນບັນດາພວກ
ເຂົາ, ເຊັ່ນດຽວກັນກັບຫົວໜ້າຜູ້ຕັດສິນ.
20 ບັດນີ້ຜູ້ຄົນໄດ້ກ່າວກັບກິດກິດໂດ
ໄນວ່າ: ຈົ່ງອະທິຖານຫາພຣະເຈົ້າເທາະ,
ແລະ ໃຫ້ພວກເຮົາຂຶ້ນໄປເທິງພູ ແລະ ເຂົ້າ
ໄປໃນຖິ່ນແຫ້ງແລ້ງກັນດານເພື່ອພວກ
ເຮົາຈະໄດ້ໂຈມຕີພວກໂຈນ ແລະ ທຳລາຍ
ພວກເຂົາເສຍໃນແຜ່ນດິນຂອງພວກເຂົາ
ເອງ.
21 ແຕ່ກິດກິດໂດໄນໄດ້ກ່າວກັບພວກ
ເຂົາວ່າ: ພຣະຜູ້ເປັນເຈົ້າ [ກ]ສັ່ງຫ້າມ; ເພາະ
ຖ້າຫາກພວກເຮົາຂຶ້ນຂຶ້ນໄປໂຈມຕີພວກ
ເຂົາ ພຣະຜູ້ເປັນເຈົ້າຈະ [ຂ]ສົ່ງພວກເຮົາໄປ
ສູ່ກຳມືຂອງພວກເຂົາ; ສະນັ້ນ ພວກເຮົາ
ຈະຕຽມຕົວເອງໃນໃຈກາງແຜ່ນດິນຂອງ
ພວກເຮົາ, ແລະ ພວກເຮົາຈະເຕົ້າໂຮມ
ກອງທັບທັງໝົດຂອງພວກເຮົາໄວ້, ແລະ
ພວກເຮົາຈະບໍ່ໄປໂຈມຕີພວກເຂົາ, ແຕ່
ພວກເຮົາຈະລໍຄອຍພວກເຂົາຈົນກວ່າ
ພວກເຂົາຈະຍົກທັບມາໂຈມຕີພວກເຮົາ;
ສະນັ້ນ ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະ
ຊົນຢູ່, ຖ້າຫາກພວກເຮົາເຮັດຕາມນີ້ ພຣະ
ອົງຈະສົ່ງພວກເຂົາມາສູ່ກຳມືຂອງພວກ
ເຮົາ.
22 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ສິບເຈັດ, ໃນທ້າຍປີທີສິບເຈັດ, ມີການປະ
ກາດຂອງເລໂຄນີອັດອອກໄປຕະຫລອດ
ທົ່ວພື້ນແຜ່ນດິນ, ແລະ ພວກເຂົາໄດ້ເອົາ
ມ້າຂອງພວກເຂົາ, ແລະ ລົດຮົບຂອງພວກ
ເຂົາ, ແລະ ຝູງງົວຂອງພວກເຂົາ, ແລະ ຝູງ
ສັດລ້ຽງທັງໝົດຂອງພວກເຂົາ, ແລະ ຝູງ
ສັດໃຊ້ແຮງງານຂອງພວກເຂົາ, ແລະ ພືດ
ພັນທັນຍາຫານຂອງພວກເຂົາ, ແລະ ເຂົ້າ
ຂອງທັງໝົດຂອງພວກເຂົາ, ແລະ ໄດ້ຍົກ
ອອກໄປເປັນພັນໆເປັນໝື່ນໆຈົນວ່າພວກ
ເຂົາໄດ້ອອກໄປຮອດບ່ອນທີ່ໄດ້ກຳນົດໄວ້
ໃຫ້ພວກເຂົາໄປເຕົ້າໂຮມກັນເພື່ອປ້ອງກັນ
ຕົວໃຫ້ພົ້ນຈາກສັດຕູຂອງພວກເຂົາ.
23 ແລະ ແຜ່ນດິນຊຶ່ງໄດ້ກຳນົດໄວ້ຄື
ແຜ່ນດິນເຊຣາເຮັມລາ, ແລະ ແຜ່ນດິນທີ່
ຢູ່ລະຫວ່າງແຜ່ນດິນເຊຣາເຮັມລາ ແລະ
ແຜ່ນດິນອຸດົມສົມບູນ, ແທ້ຈິງແລ້ວ, ຕາມ
ເສັ້ນທາງທີ່ຢູ່ລະຫວ່າງແຜ່ນດິນອຸດົມສົມ
ບູນກັບແຜ່ນດິນຮ້າງ.
24 ແລະ ມັນມີຜູ້ຄົນຫລາຍພັນຄົນຜູ້ມີຊື່
ວ່າຊາວນີໄຟ ໄດ້ມາເຕົ້າໂຮມກັນໃນແຜ່ນ
ດິນນັ້ນ. ບັດນີ້ເລໂຄນີອັດໄດ້ໃຫ້ພວກ
ເຂົາໄປເຕົ້າໂຮມກັນຢູ່ໃນແຜ່ນດິນທາງ
ໃຕ້ ເພາະຄຳສາບແຊ່ງຢ່າງໜັກຊຶ່ງມີກັບ
[ກ]ແຜ່ນດິນທາງເໜືອ.
25 ແລະ ພວກເຂົາໄດ້ເສີມກຳລັງຂຶ້ນ
ເພື່ອຕ້ານທານກັບສັດຕູຂອງພວກເຂົາ;
ແລະ ພວກເຂົາໄດ້ຢູ່ໃນແຜ່ນດິນດຽວ ແລະ
ໃນກຸ່ມດຽວ, ແລະ ພວກເຂົາຢ້ານກົວຄຳ
ທີ່ເລໂຄນີອັດໄດ້ເວົ້າໄວ້, ເຖິງຂະໜາດທີ່

18 ກ 3 ນຟ 6:6.
19 ກ ຄມພ ທຳນາຍ, ການ ທຳນາຍ, ຄຳທຳນາຍ.
21 ກ ແອວ 48:14.
ຂ 1 ຊມອ 14:12.
24 ກ ແອວ 22:31.

ພວກເຂົາໄດ້ກັບໃຈຈາກບາບທັງໝົດຂອງ
ພວກເຂົາ; ແລະ ພວກເຂົາໄດ້ອະທິຖານ
ຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາ, ເພື່ອພຣະອົງຈະໄດ້ [ກ]ປົດປ່ອຍ
ພວກເຂົາໃນເວລາທີ່ສັດຕູຈະຍົກທັບມາ
ໂຈມຕີພວກເຂົາ.
26 ແລະ ພວກເຂົາເສົ້າສະຫລົດໃຈຢ່າງ
ຍິ່ງເພາະສັດຕູຂອງພວກເຂົາ. ແລະ ກິດ
ກິດໂດໄນໄດ້ໃຫ້ພວກເຂົາສ້າງ [ກ]ອາວຸດ
ແຫ່ງສົງຄາມທຸກຊະນິດ, ແລະ ໃຫ້ພວກ
ເຂົາມີກຳລັງດ້ວຍເຄື່ອງປ້ອງກັນ, ແລະ
ດ້ວຍໂລ່, ແລະ ດ້ວຍເສື້ອຫຸ້ມເກາະ, ຕາມ
ແບບຢ່າງທີ່ເພິ່ນໄດ້ແນະນຳ.

## ບົດທີ 4

*ກອງທັບນີໄຟເອົາຊະນະພວກໂຈນແກ ດີອານທັນ—ກິດດີອານໄຮຖືກຂ້າຕາຍ, ແລະ ເຊັມນາໄຣຫາຜູ້ຮັບຕຳແໜ່ງແທນລາວຖືກແຂວນຄໍ—ຊາວນີໄຟສັນລະເສີນພຣະຜູ້ເປັນເຈົ້າສຳລັບໄຊຊະນະຂອງພວກເຂົາ. ປະມານ ຄ.ສ. 19–22.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ທ້າຍປີທີສິບແປດ ກອງທັບຂອງໂຈນ
ເຫລົ່ານັ້ນໄດ້ຕຽມສູ້ຮົບ ແລະ ເລີ່ມລົງມາຈູ່
ໂຈມຈາກເນີນພູ, ແລະ ອອກມາຈາກຫົວພູ
ແລະ ຖິ່ນແຫ້ງແລ້ງກັນດານ, ແລະ ຈາກທີ່
ໝັ້ນຕ່າງໆ ແລະ ບ່ອນລີ້ຊ່ອນຂອງພວກ
ເຂົາ, ແລະ ເລີ່ມເຂົ້າຄອບຄອງແຜ່ນດິນ
ທັງບ່ອນທາງໃຕ້ ແລະ ທັງບ່ອນທາງເໜືອ,
ແລະ ເລີ່ມເຂົ້າຄອບຄອງແຜ່ນດິນທັງໝົດ
ຊຶ່ງຊາວນີໄຟ [ກ]ປະຖິ້ມໄວ້, ແລະ ຫົວເມືອງ
ຕ່າງໆຊຶ່ງຊາວນີໄຟໄດ້ປະຖິ້ມໄວ້ໃຫ້ຮົກ
ຮ້າງ.
2 ແຕ່ຈົ່ງເບິ່ງ, ມັນບໍ່ມີສັດປ່າສຳລັບທີ່ຈະ
ລ່າເນື້ອໃນແຜ່ນດິນເຫລົ່ານັ້ນຊຶ່ງຊາວນີໄຟ
ໄດ້ປະຖິ້ມ, ແລະ ມັນບໍ່ມີສັດປ່າທີ່ຈະໃຫ້
ພວກໂຈນລ່າເລີຍ ນອກຈາກມີແຕ່ຢູ່ໃນຖິ່ນ
ແຫ້ງແລ້ງກັນດານເທົ່ານັ້ນ.
3 ແລະ ພວກໂຈນບໍ່ສາມາດດຳລົງຊີວິດ
ນອກຈາກຈະເຂົ້າໄປຢູ່ໃນຖິ່ນແຫ້ງແລ້ງກັນ
ດານ ເພາະຄວາມອຶດຫິວ ຍ້ອນວ່າຊາວ
ນີໄຟໄດ້ປະຖິ້ມແຜ່ນດິນຂອງພວກເຂົາໄວ້
ໃຫ້ຮົກຮ້າງ ແລະ ໄດ້ເຕົ້າໂຮມເອົາຝູງສັດ
ລ້ຽງຂອງພວກເຂົາ ແລະ ຝູງສັດໃຊ້ແຮງ
ງານຂອງພວກເຂົາ ແລະ ເຂົ້າຂອງທັງໝົດ
ຂອງພວກເຂົາ, ແລະ ພວກເຂົາຢູ່ເປັນກຸ່ມ
ດຽວ.
4 ສະນັ້ນ, ຈຶ່ງບໍ່ມີໂອກາດສຳລັບພວກ
ໂຈນທີ່ຈະປຸ້ນ ແລະ ຈະຊອກຫາອາຫານ
ໄດ້, ນອກຈາກຈະຍົກມາສູ້ຮົບຢ່າງເປີດ
ເຜີຍກັບຊາວນີໄຟເທົ່ານັ້ນ; ແລະ ຊາວ
ນີໄຟໂດຍທີ່ໄດ້ຢູ່ເປັນກຸ່ມດຽວ, ແລະ ມີ
ຈຳນວນຢ່າງຫລວງຫລາຍ, ແລະ ໂດຍ
ທີ່ໄດ້ເກັບມ້ຽນສະບຽງອາຫານ, ລວມທັງ
ມ້າ ແລະ ງົວ, ແລະ ຝູງສັດທຸກຊະນິດໄວ້
ສຳລັບພວກເຂົາເອງ, ເພື່ອພວກເຂົາຈະຢູ່
ລອດໄດ້ເປັນເວລາເຈັດປີ, ຊຶ່ງໃນໄລຍະ
ເວລານັ້ນ ພວກເຂົາມີຄວາມຫວັງວ່າ ພວກ
ເຂົາຈະໄດ້ທຳລາຍພວກໂຈນໃຫ້ໝົດສິ້ນ
ໄປຈາກພື້ນແຜ່ນດິນ; ແລະ ປີທີສິບແປດ
ໄດ້ຜ່ານໄປດັ່ງນີ້.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີທີສິບເກົ້າ ກິດດີອານໄຮເຫັນວ່າມັນສົມ
ຄວນທີ່ລາວຈະຍົກໄປສູ້ຮົບກັບຊາວນີໄຟ,
ເພາະວ່າມັນບໍ່ມີທາງອື່ນທີ່ພວກເຂົາຈະຢູ່
ລອດໄດ້ ນອກຈາກຈະປຸ້ນ ແລະ ລັກ ແລະ
ຂ້າເທົ່ານັ້ນ.

25 *ກ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
26 *ກ* 2 ນຟ 5:14.
**4** 1 *ກ* 3 ນຟ 3:13–14, 22.

6 ແລະ ພວກເຂົາບໍ່ກ້າທີ່ຈະກະຈັດກະ
ຈາຍ ໄປ ຕາມ ແຜ່ນ ດິນ ເທົ່າ ທີ່ ຄວນ ເພື່ອ
ພວກເຂົາຈະ ໄດ້ປູກເມັດພືດ, ເພາະຢ້ານ
ວ່າຊາວນີໄຟຈະຍົກທັບມາ ແລະ ຂ້າພວກ
ເຂົາເສຍ; ສະນັ້ນ ກິດດີອານໄຮຈຶ່ງອອກຄຳ
ສັ່ງໃຫ້ກອງທັບຂອງລາວວ່າ ໃນປີນີ້ພວກ
ເຂົາຈະຍົກໄປສູ້ຮົບກັບຊາວນີໄຟ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ຍົກທັບມາສູ້ຮົບ; ແລະ ມັນເປັນໄປ
ໃນເດືອນທີຫົກ; ແລະ ຈົ່ງເບິ່ງ, ມື້ທີ່ພວກ
ເຂົາຍົກທັບມາສູ້ຮົບນັ້ນເປັນມື້ທີ່ຍິ່ງໃຫຍ່
ແລະ ເປັນໜ້າຢ້ານກົວຫລາຍທີ່ສຸດ; ແລະ
ພວກເຂົາໄດ້ແຕ່ງຕົວຕາມແບບຢ່າງຂອງ
ພວກໂຈນ; ແລະ ພວກເຂົາຄຽນໜັງແກະ
ຮອບແອວ ຊຶ່ງຍ້ອມດ້ວຍເລືອດ, ແລະ ຫົວ
ຂອງພວກເຂົາໂລ້ນ, ແລະ ມີເຄື່ອງປ້ອງກັນ
ຫົວ, ແລະ ການປະກົດຂອງກອງທັບຂອງ
ກິດດີອານໄຮນັ້ນມີຈຳນວນພົນຢ່າງຫລວງ
ຫລາຍ ແລະ ເປັນໜ້າຢ້ານກົວຫລາຍ,
ຍ້ອນວ່າເຄື່ອງປ້ອງກັນຂອງພວກເຂົາທີ່
ຍ້ອມດ້ວຍເລືອດ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ກອງທັບຊາວນີໄຟເຫັນການປະກົດຂອງ
ກອງທັບຂອງກິດດີອານໄຮແລ້ວ, ກໍໄດ້ລົ້ມ
ລົງຢູ່ກັບພື້ນດິນ, ແລະ ໄດ້ເປັ່ງສຽງຮ້ອງທູນ
ຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາ, ເພື່ອພຣະອົງຈະໄດ້ໄວ້ຊີວິດ
ແລະ ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມື
ຂອງພວກສັດຕູ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ກອງທັບຂອງກິດດີອານໄຮເຫັນດັ່ງນີ້ ພວກ
ເຂົາຈຶ່ງມີຄວາມປິຕິຍິນດີ, ແລະ ກໍເລີ່ມຮ້ອງ
ໂຮຂຶ້ນດ້ວຍສຽງອັນດັງ ເພາະວ່າພວກເຂົາ
ຄິດວ່າ ຊາວນີໄຟໄດ້ລົ້ມລົງເພາະຄວາມ
ຢ້ານກົວກອງທັບຂອງພວກເຂົາ.
10 ແຕ່ວ່າໃນເລື່ອງນີ້ ພວກເຂົາໄດ້ຜິດ
ຫວັງ ເພາະຊາວນີໄຟບໍ່ໄດ້ [ກ]ຢ້ານກົວພວກ
ເຂົາເລີຍ; ແຕ່ພວກເຂົາຢ້ານກົວພຣະເຈົ້າ
ຂອງພວກເຂົາ ແລະ ໄດ້ອ້ອນວອນທາ
ພຣະອົງເພື່ອຂໍຄວາມຄຸ້ມຄອງ; ສະນັ້ນ,
ເວລາກອງທັບຂອງກິດດີອານໄຮແລ່ນເຂົ້າ
ມາໃສ່ພວກເຂົາ, ພວກເຂົາກໍຕຽມພ້ອມຢູ່
ແລ້ວທີ່ຈະພົບກັບພວກເຂົາ; ແທ້ຈິງແລ້ວ,
ພວກເຂົາໄດ້ຕ້ອນຮັບພວກເຂົາດ້ວຍກຳ
ລັງຂອງພຣະຜູ້ເປັນເຈົ້າ.
11 ແລະ ການສູ້ຮົບໄດ້ເລີ່ມຂຶ້ນໃນເດືອນ
ທີຫົກ; ແລະ ການສູ້ຮົບເທື່ອນີ້ຍິ່ງໃຫຍ່
ແລະ ໂຫດຮ້າຍທີ່ສຸດ, ແທ້ຈິງແລ້ວ, ການ
ຂ້າຟັນເທື່ອນີ້ໃຫຍ່ຫລວງ ແລະ ໂຫດຮ້າຍ
ທີ່ສຸດ, ເຖິງຂະໜາດທີ່ມັນບໍ່ເຄີຍມີການຂ້າ
ຟັນທີ່ໃຫຍ່ຫລວງເຊັ່ນນີ້ມາກ່ອນເລີຍໃນ
ບັນດາຜູ້ຄົນຂອງລີໄຮ ນັບຕັ້ງແຕ່ເພິ່ນໄດ້
ອອກມາຈາກເຢຣູຊາເລັມ.
12 ແລະ ເຖິງແມ່ນວ່າກິດດີອານໄຮໄດ້
[ກ]ນາບຂູ່ ແລະ ກ່າວຄຳສາບານໄວ້ກໍຕາມ,
ຈົ່ງເບິ່ງ, ຊາວນີໄຟຍັງໄດ້ໄຊຊະນະພວກ
ເຂົາ, ເຖິງຂະໜາດທີ່ພວກເຂົາໄດ້ແຕກ
ຜ່າຍໄປຕໍ່ໜ້າພວກເຂົາ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື [ກ]ກິດ
ກິດໂດໄນໄດ້ສັ່ງໃຫ້ກອງທັບຂອງເພິ່ນໄລ່
ຕາມພວກເຂົາໄປໃຫ້ຮອດຊາຍແດນຂອງ
ຖິ່ນແຫ້ງແລ້ງກັນດານ, ແລະ ວ່າບໍ່ໃຫ້ໄວ້
ຊີວິດຜູ້ໃດເລີຍທີ່ພວກເຂົາພົບເຫັນໃນ
ລະຫວ່າງທາງ; ແລະ ພວກເຂົາໄດ້ຕິດຕາມ
ພວກເຂົາໄປດັ່ງນັ້ນ, ແລະ ໄດ້ຂ້າພວກເຂົາ
ໄປຈົນຮອດຊາຍແດນຂອງຖິ່ນແຫ້ງແລ້ງ
ກັນດານ, ຈົນວ່າໄດ້ເຮັດໃຫ້ຄຳສັ່ງຂອງກິດ
ກິດໂດໄນສຳເລັດ.

10ກ ຄນພ ຢ້ານກົວ, ຄວາມຢ້ານກົວ.
12ກ 3 ນຟ 3:1–10.
13ກ 3 ນຟ 3:18.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື ກິດ
ດີອານໄຮ, ຜູ້ທີ່ຢືນຕໍ່ສູ້ດ້ວຍຄວາມອົງອາດ
ກ້າຫານໄດ້ຖືກໄລ່ຕາມໃນຂະນະທີ່ລາວໜີ
ໄປ; ແລະ ໂດຍທີ່ມີຄວາມອິດເມື່ອຍເພາະ
ການຕໍ່ສູ້ອັນຍືດຍາວຂອງລາວ, ລາວຈຶ່ງ
ຖືກຕາມທັນ ແລະ ຖືກຂ້າຕາຍ. ແລະ ນີ້ຄື
ທີ່ສຸດຂອງໂຈນກິດດີອານໄຮ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງ
ທັບຊາວນີໄຟໄດ້ກັບຄືນມາຫາບ່ອນປອດ
ໄພຂອງພວກເຂົາອີກ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ປີທີສິບເກົ້າໄດ້ຜ່ານໄປ,
ແລະ ພວກໂຈນບໍ່ໄດ້ຍົກມາສູ້ຮົບອີກ; ທັງ
ບໍ່ໄດ້ຍົກມາໃນປີທີຊາວຄືກັນ.
16 ແລະ ໃນປີທີຊາວເອັດ ພວກເຂົາກໍບໍ່
ໄດ້ຍົກມາສູ້ຮົບ, ແຕ່ວ່າພວກເຂົາໄດ້ຍົກມາ
ລ້ອມຜູ້ຄົນຂອງນີໄຟໄວ້ໂດຍຮອບ; ເພາະ
ພວກເຂົາຄິດວ່າ ຖ້າຫາກພວກເຂົາກັນຜູ້
ຄົນຂອງນີໄຟຈາກແຜ່ນດິນຂອງພວກເຂົາ,
ແລະ ລ້ອມໄວ້ທຸກດ້ານ, ແລະ ຖ້າຫາກ
ພວກເຂົາກັນພວກເຂົາຈາກຜົນປະໂຫຍດ
ພາຍນອກຂອງພວກເຂົາ, ແລ້ວພວກເຂົາ
ອາດຈະເຮັດໃຫ້ຄົນພວກເຂົາຕ້ອງຍອມ
ມອບຕົວຕາມຄວາມປາດຖະໜາຂອງ
ພວກເຂົາ.
17 ບັດນີ້ພວກເຂົາໄດ້ແຕ່ງຕັ້ງຫົວໜ້າ
ອີກຄົນໜຶ່ງ, ຊຶ່ງມີຊື່ວ່າ ເຊັມນາໄຮຫາ;
ສະນັ້ນ ເຊັມນາໄຮຫາຜູ້ນີ້ເອງທີ່ໄດ້ອອກ
ຄຳສັ່ງໃຫ້ປິດລ້ອມເທື່ອນີ້.
18 ແຕ່ຈົ່ງເບິ່ງ, ສິ່ງນີ້ຈຶ່ງເປັນການໄດ້ປຽບ
ແກ່ຊາວນີໄຟ; ເພາະວ່າມັນເປັນໄປບໍ່ໄດ້ທີ່
ພວກໂຈນຈະປິດລ້ອມໄດ້ຢ່າງດົນນານພໍທີ່
ຈະໄດ້ຮັບຜົນອັນໃດຈາກຊາວນີໄຟ ເພາະ
ສະບຽງອາຫານຂອງພວກເຂົາທີ່ພວກເຂົາ
ໄດ້ສະສົມໄວ້ຢ່າງຫລວງຫລາຍ,
19 ແລະ ເປັນຍ້ອນການຂາດເຂີນສະ
ບຽງອາຫານໃນບັນດາພວກໂຈນ; ເພາະ
ຈົ່ງເບິ່ງ, ພວກເຂົາບໍ່ມີອັນໃດກິນເລີຍນອກ
ຈາກຊີ້ນເທົ່ານັ້ນ, ເພື່ອພວກເຂົາຈະຢູ່ລອດ
ໄດ້ ຊຶ່ງເປັນຊີ້ນທີ່ພວກເຂົາໄດ້ເອົາມາຈາກ
ຖິ່ນແຫ້ງແລ້ງກັນດານ;
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ສັດ
[a]ປ່າທີ່ເຄີຍຫາມາໄດ້ກໍກັບຫາຍາກຫລາຍ
ຂຶ້ນໃນຖິ່ນແຫ້ງແລ້ງກັນດານ ເຖິງຂະໜາດ
ທີ່ພວກໂຈນກຳລັງຈະຕາຍດ້ວຍຄວາມອຶດ
ຫິວ.
21 ແລະ ຊາວ ນີໄຟ ໄດ້ ເລີ່ມ ເດີນ ທັບ
ຕະຫລອດທັງກາງເວັນ ແລະ ກາງຄືນ,
ແລະ ໄດ້ເຂົ້າໂຈມຕີກອງທັບຂອງພວກ
ເຂົາ ແລະ ໄດ້ຟາດຟັນພວກເຂົາລົງເປັນ
ພັນໆເປັນໝື່ນໆຄົນ.
22 ແລະ ມັນຈຶ່ງເປັນຄວາມປາດຖະໜາ
ຂອງຜູ້ຄົນຂອງເຊັມນາໄຮຫາທີ່ຈະລົ້ມ
ເລີກແຜນການຂອງພວກເຂົາດັ່ງນີ້, ເພາະ
ຄວາມພິນາດອັນໃຫຍ່ຫລວງ ຊຶ່ງເກີດກັບ
ພວກເຂົາທັງກາງເວັນ ແລະ ກາງຄືນ,
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊັມ
ນາໄຮຫາຈຶ່ງໄດ້ອອກຄຳສັ່ງໃຫ້ຜູ້ຄົນຂອງ
ລາວຖອນຕົວອອກຈາກການປິດລ້ອມ,
ແລະ ເດີນທັບຂຶ້ນໄປຫາຂົງເຂດທີ່ຢູ່ເໜືອ
ສຸດຂອງແຜ່ນດິນທາງເໜືອ.
24 ແລະ ບັດນີ້, ກິດກິດໂດໄນໂດຍທີ່ຮູ້
ຈັກແຜນການຂອງພວກເຂົາ, ແລະ ໂດຍ
ທີ່ຮູ້ຈັກເຖິງຄວາມອ່ອນແອຂອງພວກເຂົາ
ເພາະຄວາມຕ້ອງການອາຫານຂອງພວກ
ເຂົາ, ແລະ ການຂ້າຟັນຢ່າງຫລວງຫລາຍ
ຊຶ່ງເກີດຂຶ້ນໃນບັນດາພວກເຂົາ, ສະນັ້ນ
ເພິ່ນຈຶ່ງໄດ້ສັ່ງໃຫ້ກອງທັບຂອງເພິ່ນອອກ
ໄປໃນເວລາກາງຄືນ ແລະ ໄດ້ດັກສະກັດ

20 *ກ* 1 ນຟ 18:25.

ທາງໜີຂອງພວກເຂົາ ແລະ ໄດ້ວາງກຳລັງໄວ້ຕາມເສັ້ນທາງທີ່ພວກເຂົາຈະໜີໄປ.

25 ແລະ ພວກເຂົາໄດ້ເຮັດແບບນີ້ໃນເວລາກາງຄືນ, ແລະ ໄດ້ເດີນທັບເລີຍໄປທາງໜ້າຂອງພວກໂຈນ, ສະນັ້ນ ໃນມື້ຕໍ່ມາ ເວລາພວກໂຈນເລີ່ມເດີນທັບຂອງພວກເຂົາໄປ, ພວກເຂົາຈຶ່ງໄດ້ພົບກັບກອງທັບຂອງຊາວນີໄຟ ທັງທາງດ້ານໜ້າຂອງພວກເຂົາ ແລະ ທາງດ້ານຫລັງຂອງພວກເຂົາ.

26 ແລະ ພວກໂຈນຜູ້ຢູ່ທາງໃຕ້ກໍໄດ້ຖືກສະກັດກັ້ນໃນບ່ອນທີ່ພວກເຂົາໜີມາ. ແລະ ທັງໝົດນີ້ເປັນໄປຕາມຄຳສັ່ງຂອງກິດກິດໂດໄນ.

27 ແລະ ມີຫລາຍພັນຄົນທີ່ໄດ້ຍອມມອບຕົວເປັນຊະເລີຍເສິກຕໍ່ຊາວນີໄຟ, ແລະ ພວກທີ່ເຫລືອຢູ່ກໍຖືກຂ້າ.

28 ແລະ ເຊັມນາໄຣຫາຜູ້ນຳຂອງພວກເຂົາຖືກຈັບແຂວນຄໍຢູ່ເທິງຕົ້ນໄມ້, ແທ້ຈິງແລ້ວ, ຖືກແຂວນໄວ້ຢູ່ຍອດຕົ້ນໄມ້ຈົນເຖິງແກ່ຄວາມຕາຍ. ແລະ ເວລາພວກເຂົາໄດ້ແຂວນລາວໄວ້ຈົນເຖິງຕາຍແລ້ວ, ພວກເຂົາກໍໄດ້ປ້ຳຕົ້ນໄມ້ນັ້ນລົງ, ແລະ ໄດ້ຮ້ອງຂຶ້ນດ້ວຍສຽງອັນດັງ, ມີຄວາມວ່າ:

29 ຂໍພຣະຜູ້ເປັນເຈົ້າຈົ່ງປົກປັກຮັກສາຜູ້ຄົນຂອງພຣະອົງດ້ວຍເຖີດ ໃນຄວາມຊອບທຳ ແລະ ໃນໃຈອັນບໍລິສຸດຂອງພວກເຂົາ, ເພື່ອວ່າພວກເຂົາຈະໄດ້ເຮັດໃຫ້ພວກທີ່ພະຍາຍາມຂ້າພວກເຂົາດ້ວຍອຳນາດ, ແລະ ການມົ້ວສຸມລັບຖືກໂຄ່ນລົງກັບພື້ນດິນຄືກັນກັບຊາຍຜູ້ນີ້ຖືກໂຄ່ນລົງກັບພື້ນດິນ.

30 ແລະ ພວກເຂົາໄດ້ມີຄວາມປິຕິຍິນດີ ແລະ ຮ້ອງຂຶ້ນອີກເປັນສຽງດຽວກັນ, ມີຄວາມວ່າ: ຂໍ [ກ]ພຣະເຈົ້າຂອງອັບຣາຮາມ, ແລະ ພຣະເຈົ້າຂອງອີຊາກ, ແລະ ພຣະເຈົ້າຂອງຢາໂຄບ, ຈົ່ງໂປດຄຸ້ມຄອງຜູ້ຄົນພວກນີ້ດ້ວຍເຖີດ, ຕາບໃດທີ່ພວກເຂົາຍັງ [ຂ]ເອີ້ນຫາພຣະນາມຂອງພຣະເຈົ້າຂອງພວກເຂົາຢູ່ເພື່ອຂໍຄວາມຄຸ້ມຄອງ.

31 ແລະ ເຫດການໄດ້ບັງເກີດຂຶ້ນຄືພວກເຂົາທັງໝົດໄດ້ເປັ່ງສຽງອອກມາເປັນສຽງດຽວກັນໃນການຮ້ອງເພງ, ແລະ [ກ]ສັນລະເສີນພຣະເຈົ້າຂອງພວກເຂົາສຳລັບສິ່ງທີ່ຍິ່ງໃຫຍ່ຊຶ່ງພຣະອົງໄດ້ກະທຳເພື່ອພວກເຂົາ, ໃນການປົກປ້ອງພວກເຂົາບໍ່ໃຫ້ຕົກໄປສູ່ກຳມືຂອງພວກສັດຕູຂອງພວກເຂົາ.

32 ແທ້ຈິງແລ້ວ, ພວກເຂົາໄດ້ຮ້ອງອອກມາວ່າ: [ກ]ໂຮຊັນນາແດ່ອົງພຣະເຈົ້າສູງສຸດ. ແລະ ພວກເຂົາໄດ້ຮ້ອງອອກມາວ່າ: ຂໍພຣະນາມຂອງອົງພຣະຜູ້ເປັນເຈົ້າ [ຂ]ຜູ້ຊົງລິດອຳນາດຍິ່ງໃຫຍ່, ພຣະເຈົ້າສູງສຸດ, ຈົ່ງພຣະກະເສີມສຳລານເຖີດ.

33 ແລະ ໃຈຂອງພວກເຂົາເຕັມໄປດ້ວຍຄວາມສຸກຈົນຫລັ່ງນ້ຳຕາອອກມາຢ່າງຫລວງຫລາຍ ເພາະພຣະກະລຸນາທິຄຸນຂອງພຣະເຈົ້າໃນການປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ; ແລະ ພວກເຂົາຮູ້ວ່າເປັນຍ້ອນການກັບໃຈ ແລະ ການຖ່ອມຕົວຂອງພວກເຂົາ, ພວກເຂົາຈຶ່ງໄດ້ຮັບການປົດປ່ອຍໃຫ້ພົ້ນຈາກຄວາມພິນາດອັນເປັນນິດ.

## ບົດທີ 5

*ຊາວນີໄຟກັບໃຈ ແລະ ປະຖິ້ມບາບຂອງພວກເຂົາ—ມໍມອນຂຽນປະຫວັດສາດຂອງ*

30 ກ ແອວ 29:11.
ຂ ອທ 4:15.
31 ກ ແອວ 26:8.
ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
32 ກ ຄມພ ໂຮຊັນນາ.
ຂ 1 ນຟ 1:14.
ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.

*ຜູ້ຄົນຂອງເພິ່ນໄວ້ ແລະ ປະກາດພຣະຄຳ ອັນເປັນນິດແກ່ພວກເຂົາ—ອິດສະຣາເອນ ຈະເຕົ້າໂຮມຈາກການແຕກກະຈັດກະຈາຍ ອັນຍາວນານ. ປະມານ ຄ.ສ. 22–26.*

1 ແລະ ບັດນີ້ຈົ່ງເບິ່ງ, ບໍ່ມີຜູ້ໃດຈັກຄົນ ເລີຍໃນບັນດາຜູ້ຄົນທັງໝົດຂອງຊາວນີໄຟ ໄດ້ສົງໄສໃນຄຳເວົ້າຂອງສາດສະດາຜູ້ບໍ ລິສຸດທັງຫລາຍທີ່ໄດ້ເວົ້າໄວ້; ເພາະພວກ ເຂົາຮູ້ວ່າມັນຈຳເປັນທີ່ມັນຈະຕ້ອງເປັນຈິງ.

2 ແລະ ພວກເຂົາຮູ້ຈັກວ່າ ມັນສົມຄວນ ທີ່ພຣະຄຣິດຕ້ອງສະເດັດມາ ເພາະເຄື່ອງ ໝາຍຫລາຍຢ່າງ ຊຶ່ງໄດ້ເກີດຂຶ້ນຕາມຄຳ ເວົ້າຂອງສາດສະດາ; ແລະ ເພາະຫລາຍ ສິ່ງທີ່ໄດ້ເວົ້າໄວ້ນັ້ນໄດ້ເກີດຂຶ້ນແລ້ວ, ພວກ ເຂົາຈຶ່ງຮູ້ວ່າ ມັນຈຳເປັນທີ່ທຸກສິ່ງຈະເກີດ ຂຶ້ນຕາມຄຳທີ່ໄດ້ເວົ້າໄວ້.

3 ສະນັ້ນ ພວກເຂົາຈຶ່ງໄດ້ປະຖິ້ມບາບ ທັງໝົດຂອງພວກເຂົາ, ແລະ ຄວາມໜ້າ ກຽດຊັງຂອງພວກເຂົາ, ແລະ ການໂສເພ ນີຂອງພວກເຂົາ, ແລະ ໄດ້ຮັບໃຊ້ພຣະ ເຈົ້າຈົນສຸດຄວາມພາກພຽນຕະຫລອດວັນ ແລະ ຄືນ.

4 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເວລາພວກເຂົາໄດ້ຈັບພວກໂຈນທັງໝົດ ມາເປັນຊະເລີຍ, ເຖິງຂະໜາດທີ່ບໍ່ມີຜູ້ໃດ ທີ່ບໍ່ໄດ້ຖືກຂ້າໜີລອດໄປໄດ້, ພວກເຂົາຈຶ່ງ ໄດ້ເອົາຊະເລີຍເຂົ້າຄຸກ, ແລະ ໄດ້ສັ່ງສອນ ພຣະຄຳຂອງພຣະເຈົ້າໃຫ້ແກ່ພວກຊະເລີຍ ເຫລົ່ານັ້ນ; ແລະ ຫລາຍຕໍ່ຫລາຍຄົນທີ່ໄດ້ ກັບໃຈຈາກບາບຂອງພວກເຂົາ ແລະ ໄດ້ ເຂົ້າເຮັດພັນທະສັນຍາວ່າພວກເຂົາຈະ ບໍ່ເຮັດການຄາດຕະກຳອີກຕໍ່ໄປ ໄດ້ຖືກ [a]ປ່ອຍໄປ.

5 ແຕ່ຫລາຍຕໍ່ຫລາຍຄົນທີ່ບໍ່ໄດ້ເຂົ້າເຮັດ ພັນທະສັນຍາ, ແລະ ຄົນທີ່ຍັງມີຄວາມຄິດ ຄາດຕະກຳຢູ່ໃນໃຈຂອງພວກເຂົາ, ແທ້ຈິງ ແລ້ວ, ຫລາຍຕໍ່ຫລາຍຄົນທີ່ພົບເຫັນວ່າໃຊ້ ຄຳເວົ້າຂົ່ມຂູ່ພີ່ນ້ອງຂອງຕົນຢູ່ ຈຶ່ງໄດ້ຖືກ ຕັດສິນ ແລະ ລົງໂທດຕາມກົດໝາຍ.

6 ແລະ ດ້ວຍເຫດນີ້ພວກເຂົາຈຶ່ງໄດ້ຢຸດ ການມົ້ວສຸມລັບອັນຊົ່ວຮ້າຍ ແລະ ໜ້າ ກຽດຊັງທັງໝົດ ຊຶ່ງໃນນັ້ນມີຄວາມຊົ່ວຮ້າຍ ຫລາຍ, ແລະ ການຄາດຕະກຳຢ່າງຫລວງ ຫລາຍ.

7 ແລະ ປີທີ [a]ຊາວສອງໄດ້ຜ່ານໄປດັ່ງນີ້, ແລະ ປີທີຊາວສາມນຳອີກ, ແລະ ປີທີຊາວ ສີ່, ແລະ ປີທີຊາວຫ້າ; ແລະ ເວລາຊາວຫ້າ ປີໄດ້ຜ່ານໄປດັ່ງນີ້.

8 ແລະ ມີຫລາຍຢ່າງຫລາຍແນວເກີດ ຂຶ້ນ ຊຶ່ງໃນສາຍຕາຂອງຄົນບາງຄົນເຫັນ ວ່າມັນເປັນເລື່ອງທີ່ຍິ່ງໃຫຍ່ ແລະ ໜ້າອັດ ສະຈັນ; ເຖິງຢ່າງໃດກໍຕາມ, ເລື່ອງລາວ ທັງໝົດກໍບໍ່ສາມາດທີ່ຈະເອົາມາຂຽນໄວ້ ໃນໜັງສືເຫລັ້ມນີ້ໄດ້; ແທ້ຈິງແລ້ວ, ໜັງສື ເຫລັ້ມນີ້ບໍ່ສາມາດບັນທຶກແມ່ນແຕ່ [a]ໜຶ່ງ ສ່ວນຮ້ອຍຂອງສິ່ງທີ່ເກີດຂຶ້ນໃນບັນດາຜູ້ ຄົນຢ່າງຫລວງຫລາຍໃນໄລຍະຊາວຫ້າປີ ຜ່ານມາ;

9 ແຕ່ຈົ່ງເບິ່ງ ມັນມີ [a]ບັນທຶກ ຊຶ່ງມີເລື່ອງ ລາວຂອງຄວາມເປັນມາທັງໝົດຂອງຜູ້ຄົນ ພວກນີ້; ແລະ ມັນເປັນເລື່ອງລາວທີ່ສັ້ນໆ ແຕ່ເປັນຄວາມຈິງຊຶ່ງໃຫ້ໄວ້ໂດຍນີໄຟ.

10 ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ເຮັດບັນ ທຶກຂອງຂ້າພະເຈົ້າກ່ຽວກັບເລື່ອງເຫລົ່ານີ້, ຕາມບັນທຶກຂອງນີໄຟ ຊຶ່ງຖືກບັນທຶກໄວ້ ໃນແຜ່ນຈາລຶກທີ່ເອີ້ນວ່າ ແຜ່ນຈາລຶກຂອງ ນີໄຟ.

**5** 4*ກ* ຄມພ ເສລີພາບ.
7*ກ* 3 ນຟ 2:8.
8*ກ* 3 ນຟ 26:6–12.
9*ກ* ຣລມ 3:13–15.

11 ແລະ ຈົ່ງ ເບິ່ງ, ຂ້າພະ ເຈົ້າກໍ ໄດ້ບັນທຶກໄວ້ໃນແຜ່ນຈາລຶກ ຊຶ່ງຂ້າພະ ເຈົ້າໄດ້ເຮັດດ້ວຍມືຂອງຂ້າພະເຈົ້າເອງຄືກັນ.

12 ແລະ ຈົ່ງ ເບິ່ງ, ຂ້າ ພະ ເຈົ້າຊື່ວ່າ [ກ]ນໍມອນ, ໂດຍທີ່ຖືກເອີ້ນຕາມ [ຂ]ແຜ່ນດິນນໍມອນ, ແຜ່ນດິນ ທີ່ ແອວມາ ໄດ້ ສະຖາປະນາສາດສະໜາຈັກຂຶ້ນໃນບັນດາຜູ້ຄົນ, ແທ້ຈິງແລ້ວ, ມັນເປັນສາດສະໜາຈັກແຫ່ງທຳອິດທີ່ຖືກສະຖາປະນາຂຶ້ນໃນບັນດາພວກເຂົາ ຫລັງຈາກການລ່ວງລະເມີດຂອງພວກເຂົາ.

13 ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ ເປັນ ສາ ນຸ ສິດຂອງພຣະ ເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ. ຂ້າພະເຈົ້າໄດ້ຮັບການເອີ້ນຈາກພຣະອົງ ໃຫ້ປະກາດພຣະຄຳ ໃນບັນດາຜູ້ຄົນຂອງພຣະອົງ, ເພື່ອພວກເຂົາຈະໄດ້ມີຊີວິດອັນເປັນນິດ.

14 ແລະ ມັນຈຶ່ງເປັນການສົມຄວນທີ່ຂ້າພະເຈົ້າ, ຕາມພຣະປະສົງຂອງພຣະເຈົ້າ, ຄວນເຮັດ [ກ]ບັນທຶກກ່ຽວກັບສິ່ງທີ່ເປັນມາເຫລົ່ານີ້ໄວ້, ເພື່ອໃຫ້ຄຳອະທິຖານຂອງຜູ້ທີ່ໄດ້ຈາກໄປແລ້ວນັ້ນ ຊຶ່ງເປັນຜູ້ບໍລິສຸດ ໄດ້ຮັບຄວາມສຳເລັດຕາມສັດທາຂອງພວກເຂົາ—

15 ແທ້ຈິງແລ້ວ, ບັນທຶກເຫລັ້ມນ້ອຍຂອງເລື່ອງລາວທີ່ໄດ້ເກີດຂຶ້ນນັບຕັ້ງແຕ່ເວລາທີ່ລີໄຮອອກມາຈາກເຢຣູຊາເລັມ, ຈົນເຖິງເວລານີ້.

16 ສະນັ້ນ ຂ້າພະ ເຈົ້າ ຈຶ່ງ ໄດ້ ເຮັດ ບັນທຶກຈາກເລື່ອງລາວຊຶ່ງຄົນທີ່ຢູ່ມາກ່ອນຂ້າພະເຈົ້າໃຫ້ໄວ້, ຈົນຮອດຕອນຕົ້ນຂອງວັນເວລາຂອງຂ້າພະເຈົ້າ;

17 ແລະ ແລ້ວຂ້າພະເຈົ້າກໍໄດ້ເຮັດ [ກ]ບັນທຶກກ່ຽວກັບເລື່ອງທີ່ຂ້າພະເຈົ້າໄດ້ເຫັນມາດ້ວຍຕາຂອງຂ້າພະເຈົ້າເອງ.

18 ແລະ ຂ້າພະເຈົ້າຮູ້ວ່າ ບັນທຶກຊຶ່ງຂ້າພະເຈົ້າເຮັດໄວ້ນັ້ນເປັນບັນທຶກທີ່ຖືກຕ້ອງ ແລະ ເປັນຄວາມຈິງ; ເຖິງຢ່າງໃດກໍຕາມ ມັນຍັງມີອີກຫລາຍສິ່ງຫລາຍຢ່າງ ຊຶ່ງພວກເຮົາບໍ່ສາມາດຈະ [ກ]ຂຽນໄວ້ໄດ້ຕາມພາສາຂອງພວກເຮົາ.

19 ແລະ ບັດນີ້ຂ້າພະເຈົ້າຂໍຈົບການເວົ້າເຖິງຕົວຂອງຂ້າພະເຈົ້າເອງໄວ້ພຽງເທົ່ານີ້, ແລະ ຕໍ່ໄປນີ້ຈະເລີ່ມເລົ່າເລື່ອງລາວກ່ຽວກັບສິ່ງທີ່ເປັນມາກ່ອນຂ້າພະເຈົ້າ.

20 ຂ້າພະເຈົ້າຄືນໍມອນ, ແລະ ເປັນຜູ້ສືບເຊື້ອສາຍໂດຍແທ້ຈິງຂອງລີໄຮ. ຂ້າພະເຈົ້າມີເຫດຜົນທີ່ຈະຖວາຍພອນແດ່ພຣະເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງຂ້າພະເຈົ້າພຣະເຢຊູຄຣິດ, ທີ່ພຣະອົງໄດ້ນຳພາບັນພະບຸລຸດຂອງພວກເຮົາອອກມາຈາກແຜ່ນດິນເຢຣູຊາເລັມ, (ແລະ [ກ]ບໍ່ມີຜູ້ໃດຮູ້ຈັກເລື່ອງນີ້ເລີຍ ນອກຈາກພຣະອົງເອງ ແລະ ຜູ້ທີ່ພຣະອົງໄດ້ນຳອອກມາຈາກແຜ່ນດິນນັ້ນ) ແລະວ່າພຣະອົງໄດ້ປະທານຄວາມຮູ້ຢ່າງມະຫາສານໃຫ້ແກ່ຂ້າພະເຈົ້າ ແລະ ຜູ້ຄົນຂອງຂ້າພະເຈົ້າໄປສູ່ຄວາມລອດແຫ່ງຈິດວິນຍານຂອງພວກເຮົາ.

21 ພຣະ ອົງ ໄດ້ ປະທານ ພອນ ໃຫ້ ແກ່ [ກ]ເຊື້ອສາຍຂອງ [ຂ]ຢາໂຄບໂດຍແນ່ແທ້, ແລະ ໄດ້ [ຄ]ເມດຕາລູກຫລານຂອງໂຢເຊັບ.

22 ແລະ [ກ]ຕາບໃດທີ່ລູກຫລານຂອງລີໄຮຍັງຮັກສາພຣະບັນຍັດຂອງພຣະອົງຢູ່

12 ກ ມມ 1:1–5.
ຂ ມຊຢ 18:4; ແອວ 5:3.
14 ກ ອນ 1:13–18; ຄພ 3:19–20.
17 ກ ມມ 1:1.
18 ກ ອທ 12:25.
20 ກ 1 ນຟ 4:36.
21 ກ ຄມພ ອິດສະຣາເອນ.
ຂ ປຖກ 32:28.
ຄ ພບຍ 33:13–17.
22 ກ 2 ນຟ 1:20.

ພຣະອົງໄດ້ປະທານພອນໃຫ້ແກ່ພວກເຂົາ
ແລະ ເຮັດໃຫ້ພວກເຂົາຈະເລີນຮຸ່ງເຮືອງ
ຕາມຄຳຂອງພຣະອົງ.
23 ແທ້ ຈິງ ແລ້ວ, ແລະ ແນ່ ນອນ ທີ່ ສຸດ
ພຣະອົງຈະເອົາ [ກ]ສ່ວນໜຶ່ງທີ່ເຫລືອຢູ່ຂອງ
ລູກຫລານ ຂອງ ໂຢເຊັບ ມາສູ່ [ຂ]ຄວາມຮູ້
ເລື່ອງພຣະຜູ້ເປັນ ເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ.
24 ແລະ ຕາບ ໃດທີ່ພຣະຜູ້ເປັນ ເຈົ້າຊົງ
ພຣະຊົນຢູ່ຢ່າງແນ່ນອນສັນໃດ, ພຣະອົງ
ຈະ [ກ]ເຕົ້າໂຮມສ່ວນທີ່ເຫລືອຢູ່ທັງໝົດຂອງ
ລູກຫລານຂອງຢາໂຄບ, ຈາກສີ່ສ່ວນຂອງ
ແຜ່ນດິນໂລກເຂົ້າກັນສັນນັ້ນ ຊຶ່ງພວກເຂົາ
ໄດ້ແຕກກະຈັດກະຈາຍໄປຕາມພື້ນແຜ່ນ
ດິນໂລກ.
25 ແລະ ພຣະອົງໄດ້ເຮັດພັນທະສັນຍາ
ໄວ້ກັບ ເຊື້ອສາຍຂອງຢາໂຄບ ທັງໝົດສັນ
ໃດ, ພັນທະສັນຍາຊຶ່ງພຣະອົງໄດ້ເຮັດ ໄວ້
ກັບເຊື້ອສາຍຂອງຢາໂຄບຈະສຳເລັດໃນ
ເວລາອັນເໝາະສົມຂອງພຣະອົງເອງສັນ
ນັ້ນ, ຈົນເຖິງ [ກ]ການນຳເອົາເຊື້ອສາຍຂອງ
ຢາໂຄບທັງໝົດກັບມາຫາຄວາມຮູ້ເລື່ອງ
ພັນທະສັນຍາທີ່ພຣະອົງໄດ້ເຮັດໄວ້ກັບ
ພວກເຂົາ.
26 ແລະ ເມື່ອນັ້ນ ພວກ ເຂົາ ຈະ [ກ]ຮູ້ ຈັກ
ພຣະ ຜູ້ ໄຖ່ຂອງພວກ ເຂົາ, ຄື ພຣະ ເຢຊູ
ຄຣິດພຣະບຸດຂອງພຣະເຈົ້າ; ແລະ ເມື່ອ
ນັ້ນ ພວກເຂົາຈະຖືກເຕົ້າໂຮມຈາກສີ່ສ່ວນ
ຂອງແຜ່ນດິນໂລກ, ເຂົ້າມາຫາແຜ່ນດິນ
ຂອງພວກເຂົາເອງ ຊຶ່ງພວກເຂົາໄດ້ໜີຈາກ
ໄປ; ແທ້ຈິງແລ້ວ, ຕາບໃດທີ່ພຣະຜູ້ເປັນ
ເຈົ້າຊົງພຣະຊົນຢູ່ສັນໃດ, ມັນກໍຈະເປັນໄປ
ສັນນັ້ນ. ອາແມນ.

## ບົດທີ 6

*ຊາວນີໄຟຈະເລີນຮຸ່ງເຮືອງຂຶ້ນ—ຄວາມທະນົງຕົວ, ຄວາມຮັ່ງມີເປັນດີ, ແລະ ການແບ່ງຊັ້ນວັນນະເກີດຂຶ້ນ—ສາດສະໜາຈັກແຕກແຍກດ້ວຍຄວາມບໍ່ລົງລອຍກັນ—ຊາຕານນຳພາຜູ້ຄົນໃນການກະບົດຢ່າງເປີດເຜີຍ—ສາດສະດາຫລາຍທ່ານຂໍຮ້ອງໃຫ້ມີການກັບໃຈ ແລະ ໄດ້ຖືກຂ້າ—ຜູ້ຄາດຕະກຳພວກເພິ່ນສົມຄົບຄິດກະບົດເພື່ອໂຄ່ນລົ້ມຝ່າຍຜູ້ປົກຄອງ. ປະມານ ຄ.ສ. 26–30.*

1 ແລະ ບັດນີ້ ເຫດການ ໄດ້ບັງ ເກີດ ຂຶ້ນ
ຄື ຜູ້ຄົນຂອງນີໄຟທັງໝົດໄດ້ກັບຄືນໄປຫາ
ແຜ່ນດິນຂອງພວກເຂົາເອງໃນປີທີຊາວ
ຫົກ, ຜູ້ຊາຍທຸກຄົນ, ພ້ອມດ້ວຍຄອບຄົວ
ຂອງພວກເຂົາ, ພ້ອມທັງຝູງສັດລ້ຽງຂອງ
ພວກເຂົາ, ແລະ ຝູງສັດໃຊ້ແຮງງານຂອງ
ພວກເຂົາ, ມ້າຂອງພວກເຂົາ ແລະ ງົວຂອງ
ພວກເຂົາ, ແລະ ທຸກສິ່ງທຸກຢ່າງບໍ່ວ່າອັນ
ໃດກໍຕາມທີ່ເປັນຂອງພວກເຂົາ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາຍັງບໍ່ໄດ້ກິນສະບຽງອາຫານຂອງພວກ
ເຂົາທັງໝົດເທື່ອ; ສະນັ້ນ ພວກເຂົາຈຶ່ງໄດ້
ເອົາສິ່ງຂອງທີ່ຍັງບໍ່ທັນໄດ້ໃຊ້ທັງໝົດໄປກັບ
ພວກເຂົາ, ຊຶ່ງມີເມັດພືດທຸກຊະນິດທັງໝົດ
ຂອງພວກເຂົາ, ແລະ ຄຳຂອງພວກເຂົາ,
ແລະ ເງິນຂອງພວກເຂົາ, ແລະ ຂອງມີຄ່າ
ທັງໝົດຂອງພວກເຂົາ, ແລະ ພວກເຂົາໄດ້
ກັບຄືນໄປຫາແຜ່ນດິນຂອງພວກເຂົາເອງ,
ແລະ ສິ່ງຂອງ ຂອງພວກເຂົາເອງ, ທັງຢູ່
ທາງເໜືອ ແລະ ຢູ່ທາງໃຕ້, ທັງໃນແຜ່ນດິນ
ທາງເໜືອ ແລະ ໃນແຜ່ນດິນທາງໃຕ້.

23 *ກ* ແອວ 46:24.
*ຂ* 2 ນຟ 3:12.
24 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
25 *ກ* 3 ນຟ 16:5.
26 *ກ* 2 ນຟ 30:5–8; 3 ນຟ 20:29–34.

3 ແລະ ພວກເຂົາໄດ້ແບ່ງປັນທີ່ດິນໃຫ້ແກ່ພວກໂຈນເຫລົ່ານັ້ນທີ່ໄດ້ເຂົ້າເຮັດພັນທະສັນຍາວ່າຈະຮັກສາສັນຕິສຸກໃນແຜ່ນດິນ, ຜູ້ປາດຖະໜາເປັນຊາວເລມັນຢູ່ຕໍ່ໄປ, ຕາມຈຳນວນໜ້ອຍຫລາຍຂອງພວກເຂົາ, ເພື່ອພວກເຂົາຈະໄດ້ມີບ່ອນທຳມາຫາກິນ, ແລະ ພວກເຂົາໄດ້ສະຖາປະນາສັນຕິສຸກຂຶ້ນໃນທົ່ວແຜ່ນດິນດັ່ງນັ້ນ.

4 ແລະ ພວກເຂົາເລີ່ມຮຸ່ງເຮືອງ ແລະ ໃຫຍ່ຍິ່ງຂຶ້ນອີກ; ແລະ ປີທີຊາວຫົກ ແລະ ຊາວເຈັດໄດ້ຜ່ານໄປ, ແລະ ມັນມີຄວາມເປັນລະບຽບຮຽບຮ້ອຍຫລາຍໃນແຜ່ນດິນ; ແລະ ພວກເຂົາໄດ້ຕັ້ງກົດຂຶ້ນຕາມຄວາມເປັນທຳ ແລະ ຄວາມຍຸດຕິທຳ.

5 ແລະ ບັດນີ້ບໍ່ມີສິ່ງໃດໃນທົ່ວແຜ່ນດິນທີ່ຈະຂັດຂວາງບໍ່ໃຫ້ຜູ້ຄົນຈະເລີນຮຸ່ງເຮືອງຕະຫລອດໄປໄດ້, ເວັ້ນເສຍແຕ່ພວກເຂົາຈະຕົກໄປສູ່ການລ່ວງລະເມີດເທົ່ານັ້ນ.

6 ແລະ ບັດນີ້ແມ່ນກິດກິດໂດໄນ ແລະ ຜູ້ຕັດສິນເລໂຄນີອັດ, ແລະ ພວກທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ນຳ ເປັນຜູ້ສະຖາປະນາສັນຕິສຸກອັນຍິ່ງໃຫຍ່ຂຶ້ນໃນແຜ່ນດິນ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນໄດ້ມີຫລາຍເມືອງທີ່ຖືກສ້າງຂຶ້ນໃໝ່, ແລະ ຫລາຍເມືອງທີ່ເກົ່າແກ່ກໍໄດ້ຮັບການສ້ອມແຊມ.

8 ແລະ ມັນ ມີ ການ ສ້າງ ທາງ ຫລວງຫລາຍສາຍ, ແລະ ຖະໜົນຫົນທາງຫລາຍສາຍ ຊຶ່ງນຳໄປຈາກເມືອງໜຶ່ງຫາອີກເມືອງໜຶ່ງ, ແລະ ຈາກແຜ່ນດິນໜຶ່ງໄປຫາອີກແຜ່ນດິນໜຶ່ງ, ແລະ ຈາກບ່ອນໜຶ່ງໄປຫາອີກບ່ອນໜຶ່ງ.

9 ແລະ ປີທີຊາວແປດໄດ້ຜ່ານໄປ, ແລະ ຜູ້ຄົນກໍມີສັນຕິສຸກຕະຫລອດເວລາ.

10 ແຕ່ເຫດການໄດ້ບັງເກີດຂຶ້ນໃນປີທີຊາວເກົ້າ ມັນໄດ້ເລີ່ມມີການໂຕ້ຖຽງກັນເລັກໜ້ອຍໃນບັນດາຜູ້ຄົນ; ແລະ ມີບາງຄົນລະເມີເພີ້ຝັນດ້ວຍ [ກ]ຄວາມທະນົງຕົວ ແລະ ການອວດອ້າງເພາະຂອງມີຄ່າຢ່າງຫລວງຫລາຍຂອງພວກເຂົາ, ແທ້ຈິງແລ້ວ, ຈົນນຳໄປສູ່ການຂົ່ມເຫັງອັນໃຫຍ່ຫລວງ.

11 ເພາະວ່າມັນໄດ້ມີພໍ່ຄ້າຢ່າງຫລວງຫລາຍໃນແຜ່ນດິນ, ແລະ ທະນາຍຄວາມຢ່າງຫລວງຫລາຍ, ແລະ ເຈົ້າໜ້າທີ່ຢ່າງຫລວງຫລາຍນຳອີກ.

12 ແລະ ຜູ້ຄົນເລີ່ມມີການແບ່ງຊັ້ນວັນນະກັນຂຶ້ນຕາມ [ກ]ຄວາມຮັ່ງມີຂອງຕົນ, ແລະ ຕາມໂອກາດຂອງພວກເຂົາທີ່ໄດ້ຮຽນຮູ້; ແທ້ຈິງແລ້ວ, ບາງຄົນຂາດຄວາມຮູ້ເພາະຄວາມຍາກຈົນຂອງພວກເຂົາ, ແລະ ຄົນອື່ນໆໄດ້ຮັບການສຶກສາຢ່າງກວ້າງຂວາງເພາະຄວາມຮັ່ງມີຂອງພວກເຂົາ.

13 ບາງຄົນໄດ້ລະເມີເພີ້ຝັນດ້ວຍຄວາມທະນົງຕົວ, ແລະ ບາງຄົນເປັນຄົນຖ່ອມຕົວທີ່ສຸດ; ບາງຄົນກໍໄດ້ໂຕ້ຖຽງກັນດ້ວຍສຽງປ້ອຍດ່າ, ໃນຂະນະທີ່ບາງຄົນຍອມຮັບການປ້ອຍດ່າ ແລະ ຍອມຮັບ [ກ]ການຂົ່ມເຫັງ ແລະ ຄວາມທຸກນາໆປະການ, ແລະ ບໍ່ຍອມໂຕ້ຕອບ ແລະ [ຂ]ໝິ່ນປະໝາດຄືນ, ມີແຕ່ຖ່ອມຕົວ ແລະ ສຳນຶກຜິດຕໍ່ພຣະພັກຂອງພຣະເຈົ້າ.

14 ແລະ ມັນຈຶ່ງມີຄວາມບໍ່ສະເໝີພາບກັນໃນທົ່ວແຜ່ນດິນ, ເຖິງຂະໜາດທີ່ສາດສະໜາຈັກເລີ່ມແຕກແຍກ; ແທ້ຈິງແລ້ວ, ເຖິງຂະໜາດທີ່ສາດສະໜາຈັກໃນທົ່ວ

**6** 10*ກ* ຄມພ ຈອງຫອງ, ຄວາມຈອງຫອງ.
12*ກ* 1 ຕມທ 6:17–19; ຣລມ 4:12.
13*ກ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
*ຂ* ມທ 5:39; 4 ນຟ 1:34; ຄພ 98:23–25.

ແຜ່ນດິນໄດ້ເລີ່ມຕົ້ນແຕກແຍກກັນໃນປີທີ
ສາມສິບ ນອກຈາກໃນບັນດາຊາວເລມັນ
ຈຳນວນໜ້ອຍໜຶ່ງຜູ້ທີ່ປ່ຽນໃຈເຫລື້ອມໃສ
ມາສູ່ສັດທາທີ່ແທ້ຈິງ; ແລະ ພວກເຂົາຈະ
ບໍ່ຖິ້ມມັນໄປ ເພາະພວກເຂົາໝັ້ນຄົງ, ແລະ
ແນ່ວແນ່, ແລະ ບໍ່ຫວັ່ນໄຫວ, ເຕັມໃຈທີ່ຈະ
ຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າ
ດ້ວຍສຸດ [ກ]ຄວາມພາກພຽນ.
15 ບັດນີ້ສາເຫດຂອງຄວາມຊົ່ວຮ້າຍ
ຂອງຜູ້ຄົນແມ່ນຄືແນວນີ້—ຊາຕານໄດ້ມີ
ອຳນາດອັນຍິ່ງໃຫຍ່ໃນການຍຸຍົງໃຫ້ຜູ້ຄົນ
ເຮັດຄວາມຊົ່ວຮ້າຍນາໆປະການ, ແລະ
ເຮັດໃຫ້ພວກເຂົາຫລົງໄຫລດ້ວຍຄວາມ
ທະນົງຕົວ, ລໍ້ລວງພວກເຂົາໃຫ້ສະແຫວງ
ຫາອຳນາດ ແລະ ສິດອຳນາດ, ແລະ ຂອງ
ມີຄ່າ, ແລະ ສິ່ງທີ່ບໍ່ມີປະໂຫຍດຂອງໂລກ.
16 ແລະ ຊາຕານໄດ້ຊັກນຳໃຈຂອງຜູ້ຄົນ
ໃຫ້ເຮັດຄວາມຊົ່ວຮ້າຍນາໆປະການດັ່ງນີ້;
ສະນັ້ນ ພວກເຂົາຈຶ່ງໄດ້ຊື່ນຊົມຢູ່ກັບສັນຕິ
ສຸກພຽງແຕ່ບໍ່ເທົ່າໃດປີເທົ່ານັ້ນ.
17 ແລະ ດ້ວຍເຫດນີ້, ໃນຕົ້ນປີທີສາມ
ສິບ—ຜູ້ຄົນໄດ້ຖືກປະປ່ອຍໄວ້ເປັນເວລາ
ດົນນານຢູ່ນຳ [ກ]ການລໍ້ລວງຂອງມານຕາມ
ແຕ່ມັນປາດຖະໜາທີ່ຈະພາພວກເຂົາໄປ,
ແລະ ໃຫ້ເຮັດຄວາມຊົ່ວຮ້າຍຕາມແຕ່ມັນ
ປາດຖະໜາທີ່ຈະໃຫ້ພວກເຂົາເຮັດ—
ແລະ ຕົ້ນປີທີສາມສິບນີ້, ຜູ້ຄົນຈຶ່ງໄດ້ຕົກ
ຢູ່ໃນສະພາບແຫ່ງຄວາມຊົ່ວຮ້າຍອັນເປັນ
ຕາຢ້ານດັ່ງນີ້.
18 ບັດນີ້ພວກເຂົາບໍ່ໄດ້ເຮັດບາບໂດຍ
[ກ]ບໍ່ຮູ້ເທົ່າເຖິງການ, ເພາະພວກເຂົາຮູ້ຈັກ
ເຖິງພຣະປະສົງຂອງພຣະເຈົ້າກ່ຽວກັບ
ພວກເຂົາ, ເພາະພວກເຂົາໄດ້ຮັບການສິດ
ສອນມາແລ້ວ; ສະນັ້ນ ພວກເຂົາຈຶ່ງໄດ້
[ຂ]ກະບົດຕໍ່ພຣະເຈົ້າໂດຍເຈດຕະນາ.
19 ແລະ ບັດນີ້ມັນເປັນໄປໃນວັນເວລາ
ຂອງເລໂຄນີອັດຜູ້ເປັນລູກຊາຍຂອງເລໂຄ
ນີອັດ, ເພາະວ່າເລໂຄນີອັດໄດ້ຮັບຕຳແໜ່ງ
ແທນບິດາຂອງເພິ່ນ ແລະ ໄດ້ປົກຄອງຜູ້
ຄົນໃນປີນັ້ນ.
20 ແລະ ມັນເລີ່ມມີຄົນໄດ້ຮັບ [ກ]ການ
ດົນໃຈຈາກສະຫວັນ ແລະ ຖືກສົ່ງໄປຫາ
ບັນດາຜູ້ຄົນໃນທົ່ວແຜ່ນດິນເພື່ອສັ່ງສອນ
ແລະ ໃຫ້ຖ້ອຍຄຳຢ່າງອາດຫານເຖິງບາບ
ແລະ ຄວາມຊົ່ວຮ້າຍຂອງຜູ້ຄົນ, ແລະ ໄດ້
ໃຫ້ຖ້ອຍຄຳແກ່ພວກເຂົາກ່ຽວກັບການໄຖ່,
ຊຶ່ງພຣະຜູ້ເປັນເຈົ້າຈະກະທຳເພື່ອຜູ້ຄົນ
ຂອງພຣະອົງ, ຫລື ອີກຄຳໜຶ່ງຄື ການຟື້ນ
ຄືນພຣະຊົນຂອງພຣະຄຣິດ; ແລະ ເຂົາ
ເຈົ້າໄດ້ໃຫ້ຖ້ອຍຄຳຢ່າງອາດຫານເຖິງ
[ຂ]ການສິ້ນພຣະຊົນ ແລະ ການທຸກທໍລະ
ມານຂອງພຣະອົງ.
21 ບັດນີ້ມັນໄດ້ມີຜູ້ຄົນຈຳນວນຫລວງ
ຫລາຍທີ່ຄຽດແຄ້ນຫລາຍທີ່ສຸດໃຫ້ແກ່ຜູ້
ທີ່ໃຫ້ຖ້ອຍຄຳເຖິງເລື່ອງເຫລົ່ານີ້; ແລະ ຜູ້
ທີ່ຄຽດແຄ້ນນັ້ນສ່ວນຫລາຍເປັນພວກ
ຫົວໜ້າຜູ້ຕັດສິນ, ແລະ ພວກທີ່ [ກ]ໄດ້ເປັນ
ມະຫາປະໂລຫິດ ແລະ ພວກທະນາຍ
ຄວາມ; ແທ້ຈິງແລ້ວ, ພວກທະນາຍຄວາມ
ທັງໝົດໄດ້ຄຽດແຄ້ນໃຫ້ແກ່ຜູ້ທີ່ໃຫ້ຖ້ອຍ
ຄຳເຖິງເລື່ອງເຫລົ່ານີ້.
22 ບັດນີ້ບໍ່ມີທະນາຍຄວາມ ຫລື ວ່າຜູ້
ຕັດສິນ ຫລື ວ່າມະຫາປະໂລຫິດຄົນໃດທີ່
ຈະມີອຳນາດກ່າວໂທດຜູ້ໃດເຖິງຕາຍໄດ້

14 *ກ* ຄມພ ພາກພຽນ, ຄວາມພາກພຽນ.
17 *ກ* ຄມພ ລໍ້ລວງ, ການລໍ້ລວງ.
18 *ກ* ມຊຢ 3:11.
*ຂ* ຄມພ ກະບົດ, ການກະບົດ.
20 *ກ* ຄມພ ສາດສະດາ; ດົນໃຈ, ການດົນໃຈ.
*ຂ* ຄມພ ຄຶງ, ການຄຶງ; ຊົດໃຊ້, ການຊົດໃຊ້.
21 *ກ* ຄພ 121:36–37. ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.

ນອກຈາກຜູ້ປົກຄອງແຜ່ນດິນຈະເປັນຜູ້ລົງ
ຊື່ໃນການກ່າວໂທດນັ້ນເທົ່ານັ້ນ.
23 ບັດນີ້ມີຫລາຍຄົນໃນພວກທີ່ໃຫ້ຖ້ອຍ
ຄຳເຖິງເລື່ອງທີ່ກ່ຽວກັບພຣະຄຣິດ ຜູ້ທີ່ໄດ້
ໃຫ້ຖ້ອຍຄຳຢ່າງອາດຫານໄດ້ຖືກພວກຜູ້
ຕັດສິນຈັບໄປ ແລະ ຂ້າຢ່າງລັບໆ ເພື່ອ
ການຕາຍຂອງພວກເພິ່ນຈະບໍ່ໄດ້ຮູ້ໄປເຖິງ
ຜູ້ປົກຄອງແຜ່ນດິນ ຈົນກວ່າຫລັງຈາກ
ພວກເພິ່ນຕາຍໄປແລ້ວ.
24 ບັດນີ້ຈົ່ງເບິ່ງ, ນີ້ເປັນສິ່ງກົງກັນຂ້າມ
ກັບກົດໝາຍຂອງບ້ານເມືອງທີ່ຈະລົງໂທດ
ປະຫານຊີວິດຄົນໃດຕາມໃຈຊອບ ເວັ້ນໄວ້
ແຕ່ພວກເຂົາຈະໄດ້ຮັບອຳນາດຈາກຜູ້ປົກ
ຄອງແຜ່ນດິນເສຍກ່ອນ—
25 ສະນັ້ນ ມັນຈຶ່ງມີໃບຄຳຮ້ອງຂຶ້ນໄປ
ຫາແຜ່ນດິນເຊຣາເຮັມລາ, ເຖິງຜູ້ປົກຄອງ
ແຜ່ນດິນເພື່ອກ່າວຟ້ອງຜູ້ຕັດສິນເຫລົ່ານີ້ທີ່
ໄດ້ກ່າວໂທດສາດສະດາຂອງພຣະຜູ້ເປັນ
ເຈົ້າຈົນເຖິງແກ່ຄວາມຕາຍ, ຊຶ່ງມັນບໍ່ເປັນ
ໄປຕາມກົດໝາຍ.
26 ບັດ ນີ້ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາຈຶ່ງໄດ້ຖືກຈັບ ແລະ ຖືກນຳໄປຢູ່
ຕໍ່ໜ້າຜູ້ຕັດສິນ, ເພື່ອຮັບການຕັດສິນຕາມ
ຄວາມຜິດທີ່ພວກເຂົາໄດ້ເຮັດໄປນັ້ນຕາມ
[ກ]ກົດໝາຍຊຶ່ງຜູ້ຄົນໄດ້ຕັ້ງໄວ້.
27 ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຕັດສິນເຫລົ່ານີ້ ມີເພື່ອນຝູງ ແລະ ຍາດພີ່
ນ້ອງຫລາຍຄົນ; ແລະ ພວກທີ່ເຫລືອຢູ່,
ແທ້ຈິງແລ້ວ, ພວກທະນາຍຄວາມ ແລະ
ພວກມະຫາປະໂລຫິດເກືອບໝົດທຸກຄົນ
ໄດ້ຮ່ວມມືເຂົ້າກັບຍາດພີ່ນ້ອງຂອງພວກ
ຜູ້ຕັດສິນເຫລົ່ານັ້ນ ຜູ້ທີ່ໄດ້ຖືກພິຈາລະນາ
ໂທດຕາມກົດໝາຍ.
28 ແລະ ພວກເຂົາໄດ້ເຂົ້າເຮັດ [ກ]ພັນທະ
ສັນຍາຮ່ວມກັນ, ແທ້ຈິງແລ້ວ, ເປັນພັນທະ
ສັນຍາ ຊຶ່ງຄົນແຕ່ເກົ່າກ່ອນໃຫ້ໄວ້ ຊຶ່ງ
ພັນທະສັນຍານັ້ນ [ຂ]ມານໄດ້ໃຫ້ໄວ້, ເພື່ອ
ຈະໄດ້ຮ່ວມຫົວກັນຕໍ່ສູ້ກັບຄວາມຊອບທຳ
ທັງມວນ.
29 ສະນັ້ນ ພວກເຂົາຈຶ່ງໄດ້ຮ່ວມຫົວກັນ
ຕໍ່ສູ້ກັບຜູ້ຄົນຂອງພຣະຜູ້ເປັນເຈົ້າ, ແລະ
ເຂົ້າເຮັດພັນທະສັນຍາ ເພື່ອຈະໄດ້ທຳ
ລາຍຜູ້ຄົນທີ່ຊອບທຳເຫລົ່ານັ້ນ, ເພື່ອຊ່ວຍ
ເຫລືອພວກທີ່ມີຄວາມຜິດຖານຄາດຕະກຳ
ໃຫ້ພົ້ນຈາກເງື້ອມມືຂອງຄວາມຍຸດຕິທຳ,
ຊຶ່ງກຳລັງຈະອອກໃຊ້ຕາມກົດໝາຍ.
30 ແລະ ພວກເຂົາໄດ້ຕໍ່ຕ້ານກົດໝາຍ
ແລະ ສິດທິຂອງປະເທດຊາດຂອງພວກ
ເຂົາ; ແລະ ພວກເຂົາໄດ້ເຮັດພັນທະສັນ
ຍາຮ່ວມກັນເພື່ອທຳລາຍຜູ້ປົກຄອງແຜ່ນ
ດິນ, ແລະ ເພື່ອແຕ່ງຕັ້ງ [ກ]ກະສັດຂຶ້ນປົກ
ຄອງແຜ່ນດິນ, ເພື່ອແຜ່ນດິນຈະບໍ່ໄດ້ມີເສ
ລີພາບອີກຕໍ່ໄປ ແຕ່ຈະຂຶ້ນກັບກະສັດ.

## ບົດທີ 7

*ຫົວໜ້າຜູ້ຕັດສິນຖືກຂ້າຕາຍ, ຜູ້ປົກຄອງຖືກໂຄ່ນລົ້ມ, ແລະ ຜູ້ຄົນແບ່ງແຍກກັນອອກເປັນຫລາຍເຜົ່າ—ຢາໂຄບຜູ້ຕໍ່ຕ້ານພຣະຄຣິດກາຍເປັນກະສັດຂອງກຸ່ມມົ້ວສຸມລັບ—ນີໄຟສັ່ງສອນເຖິງການກັບໃຈ ແລະ ສັດທາໃນພຣະຄຣິດ—ເຫລົ່າທູດມາປະຕິບັດສາດສະໜາກິດແກ່ເພິ່ນທຸກໆມື້, ແລະ ເພິ່ນໄດ້ໂຜດຍົກນ້ອງຊາຍຂອງເພິ່ນຂຶ້ນຈາກຕາຍ—ຫລາຍຄົນກັບໃຈ ແລະ ຮັບບັບຕິສະມາ. ປະມານ ຄ.ສ. 30–33.*

1 ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຈະສະແດງ
ແກ່ພວກທ່ານວ່າ ພວກເຂົາບໍ່ໄດ້ແຕ່ງຕັ້ງ

26 *ກ* ມຊຍ 29:25; ແອວ 1:14.
28 *ກ* ຄນພ ການມົ້ວສຸມລັບ. *ຂ* ຮລມ 6:26–30.
30 *ກ* 1 ຊມອ 8:5–7; ແອວ 51:5.

ໃຫ້ມີກະສັດປົກຄອງແຜ່ນດິນ; ແຕ່ໃນປີດຽວກັນນັ້ນ, ແທ້ຈິງແລ້ວ, ໃນປີທີສາມສິບ, ພວກເຂົາໄດ້ທຳລາຍບັນລັງຕັດສິນ, ແທ້ຈິງແລ້ວ, ໄດ້ລອບຂ້າຫົວໜ້າຜູ້ຕັດສິນຂອງແຜ່ນດິນ.

2 ແລະ ຜູ້ຄົນໄດ້ແບ່ງແຍກເປັນສັດຕູກັນ; ແລະ ພວກເຂົາໄດ້ແບ່ງແຍກກັນອອກເປັນຫລາຍເຜົ່າ, ຕາມຄອບຄົວ ແລະ ຍາດພີ່ນ້ອງ ແລະ ເພື່ອນຝູງຂອງພວກເຂົາ; ແລະ ພວກເຂົາໄດ້ທຳລາຍການປົກຄອງຂອງແຜ່ນດິນດັ່ງນີ້.

3 ແລະ ແຕ່ລະເຜົ່າກໍໄດ້ແຕ່ງຕັ້ງໃຫ້ມີຫົວໜ້າ ຫລື ຜູ້ດູແລພວກເຂົາ; ແລະ ພວກເຂົາຈຶ່ງກັບເປັນເຜົ່າຕ່າງໆ ແລະ ເປັນຫົວໜ້າເຜົ່າດັ່ງນີ້.

4 ບັດນີ້ຈົ່ງເບິ່ງ, ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ບໍ່ມີຄອບຄົວໃຫຍ່ ແລະ ຍາດພີ່ນ້ອງ ແລະ ເພື່ອນຝູງຫລາຍຄົນ; ສະນັ້ນ ເຜົ່າຂອງພວກເຂົາຈຶ່ງແຜ່ຂະຫຍາຍຢ່າງກວ້າງຂວາງ.

5 ບັດນີ້ທັງໝົດນີ້ເປັນໄປ ແລະ ຍັງບໍ່ທັນມີສົງຄາມເກີດຂຶ້ນໃນບັນດາພວກເຂົາເທື່ອ; ແລະ ຄວາມຊົ່ວຮ້າຍທັງໝົດນີ້ມາສູ່ຜູ້ຄົນ ເພາະພວກເຂົາໄດ້ [ກ]ຍອມຕົວໃຫ້ກັບອຳນາດຂອງຊາຕານ.

6 ແລະ ຂໍ້ບັງຄັບຂອງຝ່າຍຜູ້ປົກຄອງໄດ້ຖືກທຳລາຍໄປ, ເພາະ [ກ]ຄວາມມົ້ວສຸມລັບຂອງເພື່ອນຝູງ ແລະ ຍາດພີ່ນ້ອງຂອງພວກທີ່ຂ້າສາດສະດາ.

7 ແລະ ພວກເຂົາໄດ້ເຮັດໃຫ້ເກີດການຂັດແຍ້ງອັນໃຫຍ່ຫລວງໃນແຜ່ນດິນ, ເຖິງຂະໜາດທີ່ຜູ້ຄົນທີ່ຊອບທຳເກືອບຈະກາຍມາເປັນຄົນຊົ່ວໄປຈົນໝົດ; ແທ້ຈິງແລ້ວ, ຍັງມີແຕ່ຄົນທີ່ຊອບທຳຢູ່ພຽງບໍ່ເທົ່າໃດຄົນເທົ່ານັ້ນໃນບັນດາພວກເຂົາ.

8 ແລະ ເວລາຫົກປີຍັງບໍ່ທັນໄດ້ຜ່ານໄປເທື່ອນັບແຕ່ຄົນສ່ວນຫລາຍໄດ້ຫັນໄປຈາກຄວາມຊອບທຳຂອງພວກເຂົາ, ຄືກັນກັບໝາກິນສິ່ງທີ່ມັນ [ກ]ຮາກອອກມາ, ຫລື ຄືກັນກັບໝູທີ່ລ້າງແລ້ວລົງໄປນອນລຸຍຢູ່ໃນບອກອີກ.

9 ບັດນີ້ກຸ່ມມົ້ວສຸມລັບນີ້, ຊຶ່ງນຳຄວາມຊົ່ວຮ້າຍອັນໃຫຍ່ຫລວງມາສູ່ຜູ້ຄົນ, ໄດ້ມາເຕົ້າໂຮມກັນ ແລະ ໄດ້ຕັ້ງຄົນຜູ້ໜຶ່ງຂຶ້ນເປັນຫົວໜ້າຂອງພວກເຂົາ ຜູ້ທີ່ພວກເຂົາເອີ້ນວ່າ ຢາໂຄບ;

10 ແລະ ພວກເຂົາໄດ້ເອີ້ນລາວວ່າເປັນກະສັດຂອງພວກເຂົາ; ສະນັ້ນ ລາວຈຶ່ງໄດ້ກາຍມາເປັນກະສັດປົກຄອງຄົນຊົ່ວກຸ່ມນີ້; ແລະ ລາວເປັນຄົນສຳຄັນທີ່ສຸດຄົນໜຶ່ງທີ່ໄດ້ອອກສຽງຕໍ່ຕ້ານສາດສະດາ ຜູ້ຊຶ່ງໃຫ້ຖ້ອຍຄຳເຖິງພຣະເຢຊູ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ມີຈຳນວນຄົນຫລາຍເທົ່າກັບເຜົ່າຕ່າງໆ, ຜູ້ໄດ້ຮ່ວມເຂົ້າກັນເປັນໜຶ່ງ ແຕ່ພວກຫົວໜ້າຂອງພວກເຂົາໄດ້ຕັ້ງກົດຂຶ້ນ, ແຕ່ລະຄົນຕາມເຜົ່າຂອງຕົນເອງ; ເຖິງຢ່າງໃດກໍຕາມພວກເຂົາກໍຍັງເປັນສັດຕູກັນຢູ່; ເຖິງແມ່ນວ່າພວກເຂົາບໍ່ໄດ້ເປັນຄົນຊອບທຳ, ແຕ່ພວກເຂົາກໍໄດ້ເຂົ້າຮ່ວມກັນກຽດຊັງພວກທີ່ໄດ້ເຂົ້າເຮັດພັນທະສັນຍາເພື່ອທຳລາຍຝ່າຍຜູ້ປົກຄອງ.

12 ສະນັ້ນ, ຢາໂຄບໂດຍທີ່ເຫັນວ່າສັດຕູມີຈຳນວນຫລາຍກວ່າພວກຕົນ, ໂດຍທີ່ລາວເອງເປັນກະສັດຂອງກຸ່ມນັ້ນ, ສະນັ້ນ ລາວຈຶ່ງໄດ້ສັ່ງໃຫ້ຜູ້ຄົນຂອງລາວໜີໄປຫາຂົງເຂດທີ່ຢູ່ເໜືອສຸດຂອງແຜ່ນດິນທາງເໜືອ, ແລະ ຢູ່ທີ່ນັ້ນຈະໄດ້ສ້າງ [ກ]ອານາ

**7** 5*ກ* ຣມ 6:13–16; ແອວ 10:25.
6*ກ* 2 ນຟ 9:9.
8*ກ* ສພສ 26:11; 2 ປຕ 2:22.
12*ກ* 3 ນຟ 6:30.

ຈັກຂຶ້ນເພື່ອພວກເຂົາເອງ, ຈົນວ່າມີພວກ
ທີ່ແຍກອອກໄປຮ່ວມກັບພວກເຂົາ, (ເພາະ
ຢາໂຄບໄດ້ເວົ້າຍຸຍົງພວກເຂົາວ່າ ມັນຈະ
ມີຜູ້ຄົນ ແຍກອອກ ໄປ ຮ່ວມ ເປັນ ຈຳນວນ
ຫລວງຫລາຍ) ແລະ ພວກ ເຂົາກັບ ມາມີ
ກຳລັງພຽງພໍທີ່ຈະຕໍ່ສູ້ກັບຜູ້ຄົນຂອງເຜົ່າ
ຕ່າງໆ; ແລະ ພວກເຂົາໄດ້ເຮັດເຊັ່ນນີ້.
13 ແລະ ການເດີນທັບຂອງພວກເຂົານັ້ນ
ວ່ອງໄວທີ່ສຸດ ເຖິງຂະໜາດທີ່ບໍ່ມີສິ່ງໃດຈະ
ຂັດຂວາງພວກເຂົາໄດ້ ຈົນວ່າພວກເຂົາໄດ້
ອອກໄປພົ້ນຈາກໄລຍະທີ່ຜູ້ຄົນຈະຕາມມາ
ທັນ. ແລະ ປີທີສາມສິບໄດ້ສິ້ນສຸດລົງດັ່ງນີ້;
ແລະ ການງານຂອງຜູ້ຄົນຂອງນີໄຟກໍເປັນ
ໄປດັ່ງນີ້.
14 ແລະ ເຫດການໄດ້ບັງເກີດຂຶ້ນໃນປີ
ທີສາມສິບເອັດຄື ພວກເຂົາໄດ້ແບ່ງແຍກ
ອອກເປັນຫລາຍເຜົ່າ, ທຸກຄົນຕາມຄອບ
ຄົວ, ຍາດພີ່ນ້ອງ ແລະ ເພື່ອນຝູງຂອງ
ເຂົາ; ເຖິງຢ່າງໃດກໍຕາມ ພວກເຂົາຍັງໄດ້
ຕົກລົງກັນວ່າ ພວກເຂົາຈະບໍ່ເຮັດສົງຄາມ
ຕໍ່ຕ້ານກັນ, ແຕ່ພວກເຂົາບໍ່ໄດ້ເປັນໜຶ່ງ
ເລື່ອງກົດໝາຍ ແລະ ລະບຽບການປົກ
ຄອງຂອງພວກເຂົາ ເພາະພວກເຂົາໄດ້ຕັ້ງ
ກົດຂຶ້ນຕາມຄວາມຄິດເຫັນຂອງຜູ້ທີ່ເປັນ
ຫົວໜ້າ ແລະ ຜູ້ນຳຂອງພວກເຂົາ. ແຕ່ວ່າ
ພວກເຂົາໄດ້ຕັ້ງກົດເຄັ່ງຄັດທີ່ສຸດຂຶ້ນວ່າ ບໍ່
ໃຫ້ແຕ່ລະເຜົ່າລ່ວງລະເມີດຊຶ່ງກັນແລະ
ກັນ, ເຖິງຂະໜາດທີ່ມັນໄດ້ມີສັນຕິສຸກຢູ່ໃນ
ແຜ່ນດິນພໍສົມຄວນ; ເຖິງຢ່າງໃດກໍຕາມ,
ໃຈຂອງພວກເຂົາໄດ້ຫັນເຫໄປຈາກພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ,
ແລະ ພວກເຂົາໄດ້ແກວ່ງກ້ອນຫີນໃສ່ສາດ
ສະດາ, ແລະ ໄດ້ຂັບໄລ່ພວກເພິ່ນອອກໄປ
ຈາກບັນດາພວກເຂົາ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
[ກ]ນີໄຟ—ໂດຍທີ່ໄດ້ຮັບການມາຢ້ຽມຢາມ
ຈາກເຫລົ່າທູດ ແລະ ໄດ້ຍິນສຸລະສຽງຂອງ
ພຣະເຈົ້ານຳອີກ, ສະນັ້ນ ນີໄຟຈຶ່ງໄດ້ເຫັນ
ເຫລົ່າທູດ, ແລະ ເປັນພະຍານດ້ວຍຕາ,
ແລະ ມີອຳນາດທີ່ຖືກປະທານໃຫ້ແກ່ເພິ່ນ
ເພື່ອເພິ່ນຈະໄດ້ຮູ້ຈັກກ່ຽວກັບການປະຕິ
ບັດສາດສະໜາກິດຂອງພຣະຄຣິດ, ແລະ
ເປັນພະຍານດ້ວຍຕາ ເຖິງການຫັນເຫຢ່າງ
ວ່ອງໄວຈາກຄວາມຊອບທຳໄປສູ່ຄວາມ
ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງ
ພວກເຂົານຳອີກ;
16 ສະນັ້ນ, ໂດຍທີ່ມີຄວາມໂສກເສົ້າ
ເພາະຄວາມແຂງກະດ້າງຂອງໃຈຂອງ
ພວກເຂົາ ແລະ ຄວາມບອດຂອງຈິດໃຈ
ຂອງພວກເຂົາ—ຈຶ່ງໄດ້ອອກໄປໃນປີດຽວ
ກັນນັ້ນ, ແລະ ເລີ່ມໃຫ້ຖ້ອຍຄຳຢ່າງອາດ
ຫານເລື່ອງການກັບໃຈ ແລະ ການປົດບາບ
ຜ່ານສັດທາໃນອົງພຣະເຢຊູຄຣິດເຈົ້າ.
17 ແລະ ເພິ່ນໄດ້ປະຕິບັດສາດສະໜາ
ກິດຫລາຍຢ່າງແກ່ພວກເຂົາ; ແລະ ບໍ່ສາ
ມາດຂຽນເລື່ອງທັງໝົດໄວ້ໄດ້, ແລະ ຖ້າຈະ
ຂຽນສ່ວນໜຶ່ງໄວ້ກໍຈະບໍ່ຄົບຖ້ວນ, ສະນັ້ນ
ມັນຈຶ່ງບໍ່ໄດ້ຖືກຂຽນໄວ້ເລີຍໃນໜັງສືເຫລັ້ມ
ນີ້. ແລະ ນີໄຟໄດ້ປະຕິບັດສາດສະໜາກິດ
ດ້ວຍ [ກ]ອຳນາດ ແລະ ດ້ວຍສິດອຳນາດອັນ
ຍິ່ງໃຫຍ່.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ຄຽດແຄ້ນໃຫ້ເພິ່ນ, ເພາະເພິ່ນ
ມີອຳນາດຫລາຍກວ່າພວກເຂົາ, ເພາະມັນ
ເປັນໄປ [ກ]ບໍ່ໄດ້ທີ່ພວກເຂົາຈະບໍ່ເຊື່ອຄຳເວົ້າ
ຂອງເພິ່ນ, ເພາະສັດທາຂອງເພິ່ນໃນອົງ
ພຣະເຢຊູຄຣິດເຈົ້ານັ້ນໃຫຍ່ຍິ່ງທີ່ສຸດຈົນວ່າ
ເຫລົ່າທູດໄດ້ມາປະຕິບັດແກ່ເພິ່ນທຸກໆມື້.

15 *ກ* 3 ນຟ 1:2.
17 *ກ* ຄນພ ອຳນາດ.
18 *ກ* 2 ນຟ 33:1; ແອວ 4:19.

19 ແລະ ໃນພຣະນາມຂອງພຣະເຢຊູ ເພິ່ນໄດ້ຂັບໄລ່ພວກຜີສາງ ແລະ [ກ]ວິນ ຍານອັນບໍ່ສະອາດອອກໄປ; ແລະ ເຖິງ ຂະໜາດທີ່ເພິ່ນໄດ້ໂຜດຍົກນ້ອງຊາຍຂອງ ເພິ່ນຂຶ້ນຈາກຕາຍ, ຫລັງຈາກທີ່ລາວຖືກຜູ້ ຄົນແກວ່ງກ້ອນຫີນໃສ່ຈົນເຖິງແກ່ຄວາມ ຕາຍ.

20 ແລະ ຜູ້ຄົນໄດ້ເຫັນເຫດການນີ້ ແລະ ໄດ້ເປັນພະຍານເຖິງເລື່ອງນີ້, ແລະ ໄດ້ ຄຽດແຄ້ນໃຫ້ເພິ່ນຍ້ອນອຳນາດຂອງເພິ່ນ; ແລະ ເພິ່ນໄດ້ເຮັດສິ່ງມະຫັດສະຈັນອີກ [ກ]ຫລາຍຢ່າງໃນພຣະນາມຂອງພຣະເຢຊູຕໍ່ ສາຍຕາຂອງຜູ້ຄົນນຳອີກ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີ ສາມສິບເອັດໄດ້ຜ່ານພົ້ນໄປ, ແລະ ມີຄົນ ບໍ່ເທົ່າໃດຄົນທີ່ປ່ຽນໃຈເຫລື້ອມໃສໃນພຣະ ຜູ້ເປັນເຈົ້າ; ແຕ່ຫລາຍຕໍ່ຫລາຍຄົນທີ່ປ່ຽນ ໃຈເຫລື້ອມໃສໄດ້ສະແດງຕໍ່ຜູ້ຄົນໂດຍ ແທ້ຈິງວ່າ ພວກເຂົາໄດ້ຖືກຢ້ຽມຢາມໂດຍ ອຳນາດ ແລະ ພຣະວິນຍານຂອງພຣະ ເຈົ້າຊຶ່ງສະຖິດຢູ່ໃນພຣະເຢຊູຄຣິດ, ຊຶ່ງໃນ ພຣະອົງພວກເຂົາເຊື່ອຖື.

22 ແລະ ຫລາຍຕໍ່ຫລາຍຄົນທີ່ໄດ້ຮັບ ການຂັບໄລ່ຜີສາງອອກຈາກຕົວຂອງພວກ ເຂົາ, ແລະ ໄດ້ຮັບການປິ່ນປົວຈາກຄວາມ ເຈັບໄຂ້ໄດ້ປ່ວຍຂອງພວກເຂົາ ແລະ ຄວາມບໍ່ຢູ່ດີມີແຮງຂອງພວກເຂົານັ້ນ, ໄດ້ ປະກາດແກ່ຜູ້ຄົນໂດຍແທ້ຈິງວ່າ ພວກເຂົາ ໄດ້ຮັບການປິ່ນປົວໂດຍພຣະວິນຍານຂອງ ພຣະເຈົ້າ, ແລະ ໄດ້ຫາຍດີເປັນປົກກະຕິ ແລ້ວ; ແລະ ພວກເຂົາໄດ້ສະແດງເຄື່ອງ ໝາຍໃຫ້ປະຈັກນຳອີກ ແລະ ໄດ້ເຮັດສິ່ງ ມະຫັດສະຈັນຫລາຍຢ່າງໃນບັນດາຜູ້ຄົນ.

23 ປີທີສາມສິບສອງກໍໄດ້ຜ່ານໄປດັ່ງ ນີ້. ແລະ ນີໄຟໄດ້ຮ້ອງປ່າວຕໍ່ຜູ້ຄົນໃນຕົ້ນ ປີທີສາມສິບສາມ; ແລະ ເພິ່ນໄດ້ສັ່ງສອນ ເລື່ອງການກັບໃຈ ແລະ ການປົດບາບໃຫ້ ແກ່ພວກເຂົາ.

24 ບັດນີ້ຂ້າພະເຈົ້າຢາກໃຫ້ທ່ານຈື່ຈຳ ໄວ້ນຳອີກວ່າ ບໍ່ມີຜູ້ໃດເລີຍທີ່ໄດ້ຮັບການ ນຳມາສູ່ການກັບໃຈໂດຍປາດສະຈາກ [ກ]ການບັບຕິສະມາດ້ວຍນ້ຳ.

25 ສະນັ້ນ, ຈຶ່ງມີຜູ້ຊາຍຫລາຍຄົນໄດ້ ຮັບການແຕ່ງຕັ້ງຈາກນີໄຟ, ເພື່ອປະຕິບັດ ສາດສະໜາກິດນີ້ ເພື່ອທຸກຄົນທີ່ມາຫາ ພວກເພິ່ນຈະໄດ້ຮັບບັບຕິສະມາດ້ວຍນ້ຳ, ແລະ ການຮັບບັບຕິສະມາດ້ວຍນ້ຳນີ້ຈະ ເປັນພະຍານ ແລະ ປະຈັກພະຍານຕໍ່ພຣະ ພັກຂອງພຣະເຈົ້າ, ແລະ ຕໍ່ຜູ້ຄົນວ່າພວກ ເຂົາໄດ້ກັບໃຈ ແລະ ໄດ້ຮັບ [ກ]ການປົດບາບ ແລ້ວ.

26 ແລະ ໃນຕົ້ນປີນີ້ ມີຄົນເປັນຈຳນວນ ຫລວງຫລາຍໄດ້ຮັບບັບຕິສະມາໄວ້ກັບ ການກັບໃຈ; ແລະ ເວລາສ່ວນຫລາຍຂອງ ປີໄດ້ຜ່ານໄປດັ່ງນີ້.

## ບົດທີ 8

*ພະຍຸຝົນຟ້າຄະນອງ, ແຜ່ນດິນໄຫວ, ໄຟ ໄໝ້, ລົມບ້າໝູ, ແລະ ການພັງທະລາຍເປັນ ຫລັກຖານເຖິງການຄຶງຂອງພຣະຄຣິດ— ຜູ້ຄົນເປັນຈຳນວນຫລວງຫລາຍຖືກທຳ ລາຍ—ຄວາມມືດປົກຄຸມແຜ່ນດິນເປັນ ເວລາສາມມື້ສາມຄືນ—ຜູ້ທີ່ລອດຕາຍໂສກ ເສົ້າເສຍໃຈຫລາຍສຳລັບຄວາມບໍ່ເຊື່ອຖື ຂອງພວກເຂົາ. ປະມານ ຄ.ສ. 33–34.*

19 *ກ* ຄມພ ວິນຍານ—ຜີມານຮ້າຍ.
20 *ກ* 3 ນຟ 8:1.
24 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
25 *ກ* ຄພ 20:37.
ຄມພ ປົດບາບ, ການປົດບາບ.

1 ແລະ ບັດນີ້ ເຫດການໄດ້ບັງເກີດຂຶ້ນ ຄື ຕາມບັນທຶກຂອງພວກເຮົາ, ແລະ ພວກເຮົາຮູ້ວ່າບັນທຶກຂອງພວກເຮົາຖືກຕ້ອງ, ເພາະຈົ່ງເບິ່ງ, ຊາຍຄົນນີ້ຜູ້ທີ່ໄດ້ຮັກສາບັນທຶກນີ້ໄວ້ເປັນຄົນຊອບທຳ—ເພາະວ່າເປັນຄວາມຈິງແທ້ໆທີ່ເພິ່ນໄດ້ເຮັດສິ່ງມະຫັດສະຈັນຫລາຍຢ່າງໃນພຣະນາມຂອງພຣະເຢຊູ; ແລະ ບໍ່ມີຄົນໃດທີ່ຈະເຮັດ [ກ]ສິ່ງມະຫັດສະຈັນໃນ [ຂ]ພຣະນາມຂອງພຣະເຢຊູໄດ້ ນອກຈາກຄົນນັ້ນຈະສະອາດໝົດຈົດຈາກຄວາມຊົ່ວຮ້າຍຂອງລາວເສຍກ່ອນ—

2 ແລະ ບັດນີ້ ເຫດການໄດ້ບັງເກີດຂຶ້ນ, ຖ້າອັນເວລາຖືກຕ້ອງຕາມຊາຍຄົນນີ້ຄິດໄລ່ໄວ້, ປີທີ [ກ]ສາມສິບສາມກໍໄດ້ຜ່ານພົ້ນໄປ;

3 ແລະ ຜູ້ຄົນເລີ່ມຄອຍເຝົ້າຫາເຄື່ອງໝາຍດ້ວຍຄວາມຕັ້ງໃຈ ຊຶ່ງສາດສະດາຊາມູເອນຄົນເລມັນໄດ້ໃຫ້ໄວ້, ແທ້ຈິງແລ້ວ, ໄດ້ລໍຖ້າເວລາທີ່ມັນຈະເກີດມີ [ກ]ຄວາມມືດເປັນເວລາສາມມື້ສາມຄືນປົກຄຸມພື້ນແຜ່ນດິນ.

4 ແລະ ມັນເລີ່ມມີຄວາມສົງໄສ ແລະ ມີການໂຕ້ຖຽງກັນຢ່າງຮຸນແຮງໃນບັນດາຜູ້ຄົນ, ທັງໆທີ່ [ກ]ເຄື່ອງໝາຍຫລາຍຢ່າງໄດ້ໃຫ້ໄວ້ແລ້ວ.

5 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສາມສິບສີ່, ໃນເດືອນທຳອິດ, ໃນວັນທີສີ່ຂອງເດືອນ, ມັນໄດ້ມີລົມແຮງເກີດຂຶ້ນທົ່ວແຜ່ນດິນຢ່າງທີ່ບໍ່ມີຜູ້ໃດເຄີຍພົບເຫັນມາກ່ອນເລີຍ.

6 ແລະ ມັນໄດ້ມີພະຍຸຝົນຟ້າຄະນອງໃຫຍ່ ແລະ ຮ້າຍແຮງນຳອີກ; ແລະ ມັນມີ [ກ]ຟ້າຮ້ອງທີ່ໜ້າຢ້ານກົວ, ເຖິງຂະໜາດທີ່ມັນໄດ້ເຮັດໃຫ້ແຜ່ນດິນໂລກທັງໝົດ [ຂ]ສັ່ນສະເທືອນຄືກັບວ່າ ມັນຈະແຍກອອກຈາກກັນ.

7 ແລະ ມັນໄດ້ມີຟ້າແມບເຫລື້ອມຢ່າງໜັກໃນທົ່ວແຜ່ນດິນ, ຢ່າງທີ່ບໍ່ເຄີຍພົບເຫັນມາກ່ອນເລີຍ.

8 ແລະ [ກ]ເມືອງເຊຣາເຮັມລາໄດ້ຖືກໄຟໄໝ້.

9 ແລະ ເມືອງໂມໂຣໄນໄດ້ຈົມລົງໄປໃນຄວາມເລິກຂອງທະເລ, ແລະ ຜູ້ອາໄສຢູ່ໃນນັ້ນກໍໄດ້ຈົມລົງໄປໃນນ້ຳ.

10 ແລະ ດິນຖືກຫອບຂຶ້ນໄປຖົມເມືອງໂມໂຣໄນຮາຈົນວ່າມັນເກີດເປັນພູເຂົາໃຫຍ່ຂຶ້ນແທນເມືອງ.

11 ແລະ ມັນມີຄວາມພິນາດອັນໃຫຍ່ຫລວງ ແລະ ໜ້າຢ້ານກົວໃນແຜ່ນດິນທາງໃຕ້.

12 ແຕ່ຈົ່ງເບິ່ງ, ມັນໄດ້ມີຄວາມພິນາດອັນໃຫຍ່ຫລວງ ແລະ ໜ້າຢ້ານກົວໃນແຜ່ນດິນທາງເໜືອຫລາຍກວ່າພາກອື່ນໆ; ເພາະຈົ່ງເບິ່ງ, ທັງພື້ນແຜ່ນດິນຖືກປ່ຽນໄປຍ້ອນພະຍຸຝົນຟ້າຄະນອງ ແລະ ລົມບ້າໝູ, ແລະ ຟ້າຮ້ອງ ແລະ ຟ້າແມບເຫລື້ອມ, ແລະ ມັນໄດ້ມີແຜ່ນດິນໄຫວຢ່າງຮ້າຍແຮງທົ່ວແຜ່ນດິນໂລກ;

13 ແລະ [ກ]ເສັ້ນທາງຫລວງສາຍຕ່າງໆໄດ້ຂາດອອກ, ແລະ ຖະໜົນທີ່ຮາບພຽງໄດ້ເສຍຫາຍໄປ, ແລະ ບ່ອນທີ່ແປນກ້ຽງ

**8** 1 *ກ* 3 ນຟ 7:19–20; ມມ 9:18–19.
*ຂ* ກຈກ 3:6; ຢຄ 4:6.
2 *ກ* 3 ນຟ 2:8.
3 *ກ* 1 ນຟ 19:10; ຮລມ 14:20, 27; 3 ນຟ 10:9.
4 *ກ* ຄນພ ຄືງ, ການຄືງ.
6 *ກ* 1 ນຟ 19:11; ຮລມ 14:21.
*ຂ* ມທ 27:45, 50–51.
8 *ກ* 4 ນຟ 1:7–8.
13 *ກ* ຮລມ 14:24; 3 ນຟ 6:8.

ກັບກາຍເປັນຂຸມຂຸຄະ.
14 ແລະ ເມືອງໃຫຍ່ທີ່ມີຊື່ສຽງຫລາຍ
ເມືອງໄດ້ [ກ]ຈົມ, ແລະ ຫລາຍເມືອງໄດ້ຖືກ
ເຜົາ, ແລະ ຫລາຍເມືອງໄດ້ສັ່ນສະເທືອນ
ຈົນວ່າອາຄານຕ່າງໆທີ່ຢູ່ໃນນັ້ນເພພັງລົງ
ກັບພື້ນດິນ, ແລະ ຜູ້ອາໄສຢູ່ໃນນັ້ນໄດ້ຖືກ
ຂ້າຕາຍ, ແລະ ສະຖານທີ່ຕ່າງໆໄດ້ຖືກປະ
ຖິ້ມໃຫ້ຮົກຮ້າງ.
15 ແລະ ມີບາງເມືອງທີ່ເຫລືອຢູ່; ແຕ່
ຄວາມເສຍຫາຍຂອງມັນນັ້ນໃຫຍ່ຫລວງທີ່
ສຸດ, ແລະ ມີຄົນເປັນຈຳນວນຫລວງຫລາຍ
ຖືກຂ້າຕາຍ.
16 ແລະ ມີບາງຄົນຖືກລົມບ້າໝູຫອບໄປ
ແລະ ບໍ່ມີຜູ້ໃດຮູ້ເລີຍວ່າ ພວກເຂົາຖືກພາ
ໄປບ່ອນໃດ; ມີແຕ່ຮູ້ວ່າ ພວກເຂົາຖືກຫອບ
ໄປ.
17 ແລະ ທັງແຜ່ນດິນໂລກກັບປ່ຽນຮູບ
ໄປດັ່ງນີ້, ຍ້ອນວ່າພະຍຸຝົນຟ້າຄະນອງ,
ແລະ ຟ້າຮ້ອງ, ແລະ ຟ້າແມບເຫລື້ອມ,
ແລະ ການສັ່ນສະເທືອນຂອງແຜ່ນດິນ.
18 ແລະ ຈົ່ງເບິ່ງ, [ກ]ຫີນໄດ້ແຍກອອກ
ເປັນສອງ; ມັນໄດ້ແຍກອອກຢູ່ທົ່ວແຜ່ນດິນ
ໂລກ, ເຖິງຂະໜາດມັນແຕກເປັນຕ່ອນໆ
ແລະ ເປັນຮອຍຕໍ່ ແລະ ແຕກແຫງຢູ່ທົ່ວໄປ
ຕາມຜືນແຜ່ນດິນ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາຟ້າຮ້ອງ, ແລະ ຟ້າແມບເຫລື້ອມ,
ແລະ ລົມພະຍຸ, ແລະ ພະຍຸຝົນຟ້າຄະນອງ,
ແລະ ແຜ່ນດິນໄຫວຢຸດລົງ—ເພາະຈົ່ງເບິ່ງ,
ມັນໄດ້ເກີດຂຶ້ນເປັນເວລາປະມານ [ກ]ສາມ
ຊົ່ວໂມງ; ແລະ ບາງຄົນເວົ້າວ່າມັນດົນກວ່າ
ນັ້ນ; ເຖິງຢ່າງໃດກໍຕາມ ເຫດການອັນໃຫຍ່
ຍິ່ງ ແລະ ໜ້າຢ້ານກົວທັງໝົດນີ້ໄດ້ເກີດຂຶ້ນ
ເປັນເວລາປະມານສາມຊົ່ວໂມງ—ແລະ
ແລ້ວ ຈົ່ງເບິ່ງ, ມັນໄດ້ມີຄວາມມືດປົກຄຸມ
ທົ່ວຜືນແຜ່ນດິນ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ໄດ້ມີຄວາມມືດອັນໜາແໜ້ນປົກຄຸມທົ່ວ
ຜືນແຜ່ນດິນ, ເຖິງຂະໜາດທີ່ຜູ້ອາໄສຢູ່ໃນ
ນັ້ນ ຜູ້ທີ່ລອດຕາຍສາມາດ [ກ]ສຳພັດ [ຂ]ກິ່ນ
ອາຍແຫ່ງຄວາມມືດໄດ້;
21 ແລະ ມັນບໍ່ມີຄວາມສະຫວ່າງເລີຍ
ເພາະຄວາມມືດ, ບໍ່ມີທັງຄວາມສະຫວ່າງ
ຈາກແສງທຽນ, ຈາກແສງກະບອງ; ທັງກໍ່
ໄຟດ້ວຍໄມ້ແນວດີ ແລະ ໄມ້ແຫ້ງແທ້ໆກໍ
ບໍ່ຕິດ, ດັ່ງນັ້ນ ມັນຈຶ່ງບໍ່ມີຄວາມສະຫວ່າງ
ເລີຍ;
22 ແລະ ມັນບໍ່ມີຄວາມສະຫວ່າງທີ່ຈະ
ເຫັນໄດ້ເລີຍ, ທັງບໍ່ມີແສງໄຟ, ຫລື ແສງມິງ
ມຽງ, ຫລື ແສງຈາກດວງຕາເວັນ, ຫລື ຈາກ
ດວງເດືອນ, ຫລື ຈາກດວງດາວ, ເພາະ
ໝອກແຫ່ງຄວາມມືດ ຊຶ່ງປົກຄຸມຢູ່ທົ່ວຜືນ
ແຜ່ນດິນນັ້ນໜາຕຶບທີ່ສຸດ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ເປັນຢູ່ເຊັ່ນນີ້ເປັນເວລາ [ກ]ສາມມື້ທີ່ມັນບໍ່ມີ
ຄວາມສະຫວ່າງທີ່ຈະເຫັນໄດ້ເລີຍ; ແລະ
ມັນໄດ້ມີຄວາມໂສກເສົ້າ ແລະ ສຽງຄວນ
ຄາງ ແລະ ສຽງຮ້ອງໄຫ້ຢ່າງໃຫຍ່ຫລວງໃນ
ບັນດາຜູ້ຄົນທັງປວງຕະຫລອດເວລາ; ແທ້
ຈິງແລ້ວ, ສຽງຄວນຄາງຂອງຜູ້ຄົນນັ້ນໃຫຍ່
ຫລວງເພາະຄວາມມືດ ແລະ ຄວາມພິນາດ
ອັນໃຫຍ່ຫລວງທີ່ໄດ້ມາສູ່ພວກເຂົາ.
24 ແລະ ໄດ້ຍິນສຽງຮ້ອງໄຫ້ຈົ່ມວ່າ
ໃນບ່ອນໜຶ່ງ, ມີຄວາມວ່າ: ໂອ້ ຖ້າຫາກ
ພວກເຮົາໄດ້ກັບໃຈກ່ອນວັນອັນຍິ່ງໃຫຍ່
ແລະ ໜ້າຢ້ານກົວນີ້, ແລະ ແລ້ວພີ່ນ້ອງ
ຂອງພວກເຮົາກໍຄົງໄດ້ຮັບການໄວ້ຊີວິດ,
ແລະ ພວກເຂົາຄົງບໍ່ໄດ້ຖືກເຜົາຢູ່ໃນເມືອງ

14 *ກ* 1 ນຟ 12:4.
18 *ກ* ຮລມ 14:21–22.
19 *ກ* ລກ 23:44.
20 *ກ* ອພຍ 10:21–22.
*ຂ* 1 ນຟ 12:5; 19:11.
23 *ກ* 1 ນຟ 19:10.

[ກ]ເຊຣາເຮັມລາທີ່ຍິ່ງໃຫຍ່ນັ້ນເລີຍ.
25 ແລະ ໄດ້ຍິນສຽງຮ້ອງໄຫ້ ແລະ ຈົ່ມ
ໃນອີກບ່ອນໜຶ່ງ, ມີຄວາມວ່າ: ໂອ້ ຖ້າຫາກ
ພວກເຮົາໄດ້ກັບໃຈກ່ອນວັນອັນຍິ່ງໃຫຍ່
ແລະ ໜ້າຢ້ານກົວນີ້, ແລະ ບໍ່ໄດ້ຂ້າ ແລະ
ບໍ່ໄດ້ແກວ່ງກ້ອນຫີນໃສ່ສາດສະດາ, ແລະ
ຂັບໄລ່ພວກເພິ່ນອອກໄປ; ແລ້ວແມ່ຂອງ
ພວກເຮົາ ແລະ ພວກລູກສາວທີ່ໜ້າຮັກ
ຂອງພວກເຮົາ, ແລະ ລູກຫລານຂອງພວກ
ເຮົາກໍຄົງໄດ້ຮັບການໄວ້ຊີວິດ, ແລະ ຄົງບໍ່
ໄດ້ຖືກຝັງຢູ່ໃນເມືອງໂມໂຣໄນຮາທີ່ຍິ່ງໃຫຍ່
ນັ້ນ. ແລະ ສຽງຄວນຄາງຂອງຜູ້ຄົນນັ້ນໃຫຍ່
ຫລວງ ແລະ ເປັນໜ້າຢ້ານກົວດັ່ງນັ້ນ.

## ບົດທີ 9

*ຢູ່ໃນຄວາມມືດນັ້ນ, ສຸລະສຽງຂອງພຣະຄຣິດໄດ້ປະກາດການທຳລາຍຂອງຜູ້ຄົນຢ່າງຫລວງຫລາຍ ແລະ ຫລາຍຫົວເມືອງຍ້ອນວ່າຄວາມຊົ່ວຮ້າຍຂອງພວກເຂົາ—ພຣະອົງປ່າວປະກາດເຖິງການຖວາຍພຣະອົງເອງ, ປະກາດວ່າ ກົດຂອງໂມເຊສຳເລັດແລ້ວ, ແລະ ເຊື້ອເຊີນມະນຸດໃຫ້ມາຫາພຣະອົງ ແລະ ລອດ. ປະມານ ຄ.ສ. 34.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ໄດ້ມີ [ກ]ສຽງທີ່ໄດ້ຍິນທົ່ວກັນໄປ ໃນບັນດາ
ຄົນທັງໝົດຜູ້ອາໄສຢູ່ໃນແຜ່ນດິນໂລກ,
ທົ່ວຜືນແຜ່ນດິນນີ້, ມີຄວາມວ່າ:
2 ວິບັດ, ວິບັດ, ວິບັດແກ່ຜູ້ຄົນພວກນີ້;
[ກ]ວິບັດແກ່ຜູ້ອາໄສຂອງທັງແຜ່ນດິນໂລກ
ຖ້າຫາກພວກເຂົາບໍ່ກັບໃຈ; ເພາະວ່າມານ
ໄດ້ [ຂ]ຫົວເຍາະເຍີ້ຍ, ແລະ ບໍລິວານຂອງມັນ
ປິຕິຍິນດີ, ເພາະພວກລູກສາວ ແລະ ພວກ
ລູກຊາຍຜູ້ທີ່ໜ້າຮັກຂອງຜູ້ຄົນຂອງພວກ
ເຮົາຖືກຂ້າຕາຍ; ແລະ ເພາະຄວາມຊົ່ວ
ຮ້າຍ ແລະ ຄວາມໜ້າກຽດຊັງຂອງພວກ
ເຂົາເອງ ພວກເຂົາຈຶ່ງລົ້ມຕາຍໄປ.
3 ຈົ່ງ ເບິ່ງ, ເຮົາ ໄດ້ ເຜົາ ເມືອງ ເຊຣາ
ເຮັມລາເມືອງໃຫຍ່ນັ້ນ ແລະ ຜູ້ອາໄສຢູ່ໃນ
ນັ້ນດ້ວຍໄຟ.
4 ແລະ ຈົ່ງເບິ່ງ, ເຮົາໄດ້ເຮັດໃຫ້ເມືອງໂມ
ໂຣໄນເມືອງໃຫຍ່ນັ້ນ ຈົມລົງໄປໃນຄວາມ
ເລິກຂອງທະເລ, ແລະ ຜູ້ອາໄສຢູ່ໃນນັ້ນກໍ
ຈົມລົງໃນນ້ຳຄືກັນ.
5 ແລະ ຈົ່ງເບິ່ງ, ເຮົາໄດ້ຝັງເມືອງໂມໂຣ
ໄນຮາເມືອງໃຫຍ່ນັ້ນ, ແລະ ຜູ້ອາໄສຢູ່ໃນ
ນັ້ນດ້ວຍດິນ, ເພື່ອເຊື່ອງຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງພວກເຂົາໃຫ້
ພົ້ນຈາກໜ້າເຮົາ, ເພື່ອເລືອດຂອງສາດ
ສະດາຜູ້ບໍລິສຸດ ແລະ ໄພ່ພົນຂອງເຮົາທັງ
ຫລາຍຈະບໍ່ໄດ້ຂຶ້ນມາຫາເຮົາເພື່ອຟ້ອງ
ພວກເຂົາອີກຕໍ່ໄປ.
6 ແລະ ຈົ່ງເບິ່ງ, ເຮົາໄດ້ເຮັດໃຫ້ເມືອງກິນ
ການຈົມລົງໄປ ແລະ ຜູ້ອາໄສຢູ່ໃນນັ້ນກໍໄດ້
ຖືກຝັງຢູ່ກັບຄວາມເລິກຂອງແຜ່ນດິນໂລກ;
7 ແລະ ເມືອງໂອໄນຮາ ແລະ ຜູ້ອາໄສຢູ່
ໃນນັ້ນ, ແລະ ເມືອງໂມຄຳ ແລະ ຜູ້ອາໄສ
ຢູ່ໃນນັ້ນ ແລະ ເມືອງເຢຣູຊາເລັມ ແລະ ຜູ້
ອາໄສຢູ່ໃນນັ້ນ, ຊຶ່ງເຮົາໄດ້ເຮັດໃຫ້ [ກ]ນ້ຳມາ
ຖ້ວມເມືອງທັງໝົດນີ້ ເພື່ອເຊື່ອງຄວາມຊົ່ວ
ຮ້າຍ ແລະ ຄວາມໜ້າກຽດຊັງຂອງພວກ
ເຂົາໃຫ້ພົ້ນຈາກໜ້າເຮົາ, ເພື່ອເລືອດຂອງ
ສາດສະດາຜູ້ບໍລິສຸດ ແລະ ໄພ່ພົນຂອງເຮົາ
ທັງຫລາຍຈະບໍ່ໄດ້ຂຶ້ນມາຫາເຮົາເພື່ອຟ້ອງ
ພວກເຂົາອີກຕໍ່ໄປ.
8 ແລະ ຈົ່ງເບິ່ງ, ເມືອງແກດິອານໄດ,
ແລະ ເມືອງແກດິອອມນາ, ແລະ ເມືອງ
ຢາໂຄບ, ແລະ ເມືອງກິມກິມໂນ, ຊຶ່ງເຮົາໄດ້

24 *ກ* ຣລມ 13:12.
9 1 *ກ* 1 ນຟ 19:11;
3 ນຟ 11:10.
2 *ກ* ມທ 11:20–21.
*ຂ* ມຊ 7:26.
7 *ກ* ອຊກ 26:19.

ເຮັດໃຫ້ເມືອງເຫລົ່ານີ້ຈົມລົງໄປ; ແລະ ເຮົາ
ໄດ້ເຮັດໃຫ້ມີ [ກ]ເນີນພູເກີດຂຶ້ນ ແລະ ເຮັດ
ໃຫ້ຮ່ອມພູຂຶ້ນມາແທນບ່ອນ, ແລະ ເຮົາໄດ້
ຝັງຜູ້ອາໄສຢູ່ໃນນັ້ນໄວ້ໃນຄວາມເລິກຂອງ
ແຜ່ນດິນໂລກ, ເພື່ອເຊື່ອງຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງຂອງພວກເຂົາໃຫ້
ພົ້ນຈາກໜ້າເຮົາ, ເພື່ອເລືອດຂອງສາດສະ
ດາ ແລະ ໄພ່ພົນຂອງເຮົາທັງຫລາຍຈະບໍ່
ໄດ້ຂຶ້ນມາຫາເຮົາເພື່ອຟ້ອງພວກເຂົາອີກຕໍ່
ໄປ.
9 ແລະ ຈົ່ງເບິ່ງ, ເຮົາໄດ້ເຮັດໃຫ້ໄຟມາ
ໄໝ້ຢາໂຄບບູກາດເມືອງໃຫຍ່ນັ້ນ ຊຶ່ງເປັນ
ທີ່ຢູ່ອາໄສຂອງຜູ້ຄົນຂອງກະສັດຢາໂຄບ,
ຍ້ອນວ່າບາບ ແລະ ຄວາມຊົ່ວຮ້າຍຂອງ
ພວກເຂົາ ຊຶ່ງມັນຊົ່ວຮ້າຍເກີນກວ່າຄວາມ
ຊົ່ວຮ້າຍທັງປວງໃນທົ່ວແຜ່ນດິນໂລກ
ຍ້ອນວ່າການຄາດຕະກຳ ແລະ ການມົ້ວ
ສຸມ [ກ]ລັບຂອງພວກເຂົາ; ເພາະວ່າພວກ
ເຂົາໄດ້ທຳລາຍສັນຕິສຸກຂອງຜູ້ຄົນຂອງ
ເຮົາ ແລະ ທຳລາຍການປົກຄອງຂອງແຜ່ນ
ດິນ; ສະນັ້ນ ເຮົາຈຶ່ງເຮັດໃຫ້ພວກເຂົາຖືກ
ເຜົາໄໝ້ໄປ ເພື່ອຈະໄດ້ [ຂ]ທຳລາຍພວກເຂົາ
ໃຫ້ພົ້ນຈາກໜ້າເຮົາ, ເພື່ອເລືອດຂອງສາດ
ສະດາ ແລະ ໄພ່ພົນຂອງເຮົາທັງຫລາຍຈະ
ບໍ່ໄດ້ຂຶ້ນມາຫາເຮົາເພື່ອຟ້ອງພວກເຂົາອີກ
ຕໍ່ໄປ.
10 ແລະ ຈົ່ງເບິ່ງ, ເຮົາໄດ້ເຮັດໃຫ້ໄຟມາ
ໄໝ້ເມືອງເລມັນ, ແລະ ເມືອງຈອດ, ແລະ
ເມືອງກາດ, ແລະ ເມືອງຄິດຄຸເມັນ, ແລະ ຜູ້
ອາໄສຢູ່ໃນນັ້ນ ເພາະຄວາມຊົ່ວຮ້າຍຂອງ
ພວກເຂົາ ທີ່ພວກເຂົາໄດ້ຂັບໄລ່ສາດສະ
ດາ ແລະ ໄດ້ແກວ່ງກ້ອນຫີນໃສ່ຜູ້ທີ່ເຮົາ
ສົ່ງໄປເພື່ອປະກາດແກ່ພວກເຂົາກ່ຽວກັບ
ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ
ຂອງພວກເຂົານັ້ນ.
11 ແລະ ຍ້ອນວ່າພວກເຂົາໄດ້ຂັບໄລ່
ພວກເພິ່ນອອກໄປ, ມັນຈຶ່ງບໍ່ມີຜູ້ໃດເປັນ
ຄົນຊອບທຳເລີຍໃນບັນດາພວກເຂົາ, ເຮົາ
ຈຶ່ງໄດ້ສົ່ງ [ກ]ໄຟລົງມາທຳລາຍພວກເຂົາ,
ເພື່ອເຊື່ອງຄວາມຊົ່ວຮ້າຍ ແລະ ຄວາມ
ໜ້າກຽດຊັງຂອງພວກເຂົາໃຫ້ພົ້ນຈາກໜ້າ
ເຮົາ, ເພື່ອເລືອດຂອງສາດສະດາ ແລະ ໄພ່
ພົນຂອງເຮົາທັງຫລາຍທີ່ເຮົາໄດ້ສົ່ງໄປໃນ
ບັນດາພວກເຂົາ ຈະບໍ່ໄດ້ຂຶ້ນມາຫາເຮົາ
[ຂ]ຈາກພື້ນດິນເພື່ອຟ້ອງພວກເຂົາອີກຕໍ່ໄປ.
12 ແລະ ເຮົາໄດ້ໃຫ້ການທຳລາຍອັນ
ໃຫຍ່ຫລວງ [ກ]ຫລາຍຢ່າງເກີດຂຶ້ນກັບແຜ່ນ
ດິນນີ້, ແລະ ກັບຜູ້ຄົນພວກນີ້, ເພາະຄວາມ
ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງ
ພວກເຂົາ.
13 ໂອ້ ພວກເຈົ້າທຸກຄົນ ໄດ້ຮັບການ
[ກ]ໄວ້ຊີວິດກໍຍ້ອນວ່າ ພວກເຈົ້າເປັນຄົນ
ຊອບທຳຫລາຍກວ່າພວກເຂົາ, ບັດນີ້ພວກ
ເຈົ້າຍັງຈະບໍ່ຫັນກັບມາຫາເຮົາບໍ, ແລະ ກັບ
ໃຈຈາກບາບຂອງພວກເຈົ້າ ແລະ ປ່ຽນໃຈ
ເຫລື້ອມໃສ, ເພື່ອເຮົາຈະໄດ້ [ຂ]ປິ່ນປົວພວກ
ເຈົ້າ?
14 ແທ້ຈິງແລ້ວ, ຕາມຄວາມຈິງເຮົາກ່າວ
ກັບພວກເຈົ້າວ່າ, ຖ້າຫາກພວກເຈົ້າເຂົ້າ
[ກ]ມາຫາເຮົາ ພວກເຈົ້າຈະມີ [ຂ]ຊີວິດນິລັນ
ດອນ. ຈົ່ງເບິ່ງ, [ຄ]ແຂນແຫ່ງຄວາມເມດຕາ
ສົງສານຂອງເຮົາໄດ້ເດ່ອອກມາຫາພວກ

8 ກ 1 ນຟ 19:11.
9 ກ ຮລມ 6:17–18, 21.
ຂ ມຊຢ 12:8.
11 ກ 2 ກສ 1:9–16;
ຮລມ 13:13.
ຂ ປຖກ 4:10.
12 ກ 3 ນຟ 8:8–10, 14.
13 ກ 3 ນຟ 10:12.
ຂ ຢມຢ 3:22;
3 ນຟ 18:32.
14 ກ 2 ນຟ 26:24–28;
ແອວ 5:33–36.
ຂ ຢຮ 3:16.
ຄ ແອວ 19:36.

ເຈົ້າແລ້ວ, ແລະ ຜູ້ໃດກໍຕາມທີ່ຈະເຂົ້າມາ
ຫາເຮົາ, ເຮົາຈະຮັບເອົາໄວ້; ແລະ ຄົນທີ່ມາ
ຫາເຮົາຈະເປັນສຸກ.

15 ຈົ່ງເບິ່ງ, ເຮົາຄືພຣະເຢຊູຄຣິດ ພຣະ
ບຸດ ຂອງພຣະ ເຈົ້າ. ເຮົາໄດ້ [ກ]ສ້າງຟ້າ
ສະຫວັນ ແລະ ແຜ່ນດິນໂລກ, ລວມທັງທຸກ
ສິ່ງທຸກຢ່າງທີ່ຢູ່ໃນນັ້ນ. ເຮົາໄດ້ຢູ່ກັບພຣະ
ບິດາຕັ້ງແຕ່ຕົ້ນ. [ຂ]ເຮົາຢູ່ໃນພຣະບິດາ ແລະ
ພຣະບິດາຢູ່ໃນເຮົາ, ແລະ ໃນເຮົາພຣະ
ບິດາແຜ່ບາລະມີພຣະນາມຂອງພຣະອົງ.

16 ເຮົາໄດ້ມາຫາຄົນຂອງເຮົາເອງ, ແລະ
ຄົນຂອງເຮົາ [ກ]ບໍ່ໄດ້ຕ້ອນຮັບເຮົາ. ແລະ ຂໍ້
ຄວາມພຣະຄຳພີກ່ຽວກັບການສະເດັດມາ
ຂອງເຮົາໄດ້ສຳເລັດແລ້ວ.

17 ແລະ ຫລາຍຕໍ່ຫລາຍຄົນທີ່ຕ້ອນຮັບ
ເຮົາ, ເຮົາຈະ [ກ]ໃຫ້ພວກເຂົາກາຍເປັນບຸດ
ຂອງພຣະເຈົ້າ; ແລະ ແມ່ນແຕ່ເຊັ່ນນັ້ນເຮົາ
ຈະໃຫ້ແກ່ຫລາຍຕໍ່ຫລາຍຄົນທີ່ຈະເຊື່ອໃນ
ນາມຂອງເຮົາ, ເພາະຈົ່ງເບິ່ງ, [ຂ]ການໄຖ່ມາ
ເຖິງໂດຍທາງເຮົາ, ແລະ ໃນເຮົາ [ຄ]ກົດຂອງ
ໂມເຊຈຶ່ງສົມບູນ.

18 ເຮົາເປັນ [ກ]ຄວາມສະຫວ່າງ ແລະ ຊີ
ວິດຂອງໂລກ. ເຮົາຄື [ຂ]ອາລະຟາ ແລະ ໂອ
ເມຄາ, ເປັນຕົ້ນ ແລະ ທີ່ສຸດ.

19 ແລະ ພວກເຈົ້າຢ່າໄດ້ຖວາຍເຄື່ອງ
ບູຊາດ້ວຍການຫລັ່ງເລືອດແກ່ເຮົາ [ກ]ອີກຕໍ່
ໄປ; ແທ້ຈິງແລ້ວ, ເຄື່ອງບູຊາ ແລະ ເຄື່ອງ
ເຜົາຂອງພວກເຈົ້າໝົດສິ້ນໄປແລ້ວ, ເພາະ
ເຮົາບໍ່ຮັບເອົາເຄື່ອງບູຊາ ແລະ ເຄື່ອງເຜົາ
ຂອງພວກເຈົ້າອີກແລ້ວ.

20 ແລະ ໃຫ້ພວກເຈົ້າ [ກ]ຖວາຍໃຈທີ່
ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດຂອງ
ພວກເຈົ້າແກ່ເຮົາເປັນເຄື່ອງບູຊາ, ແລະ
ຜູ້ໃດກໍຕາມທີ່ມາຫາເຮົາດ້ວຍໃຈທີ່ຊອກ
ຊ້ຳ ແລະ ວິນຍານທີ່ສຳນຶກຜິດ, ເຮົາຈະ
ໃຫ້ [ຂ]ບັບຕິສະມາແກ່ຜູ້ນັ້ນດ້ວຍໄຟ, ແລະ
ດ້ວຍພຣະວິນຍານບໍລິສຸດ ເຖິງແມ່ນຈະ
ເປັນຊາວເລມັນກໍຕາມ, ເພາະສັດທາຂອງ
ພວກເຂົາທີ່ມີຕໍ່ເຮົາໃນເວລາທີ່ພວກເຂົາ
ປ່ຽນໃຈເຫລື້ອມໃສ, ໄດ້ຮັບບັບຕິສະມາ
ດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດ,
ແລະ ພວກເຂົາບໍ່ຮູ້ຈັກມັນ.

21 ຈົ່ງເບິ່ງ, ເຮົາໄດ້ມາສູ່ໂລກເພື່ອນຳ
ເອົາການໄຖ່ມາສູ່ໂລກ, ເພື່ອຊ່ວຍໂລກໃຫ້
ລອດຈາກບາບ.

22 ສະນັ້ນ, ຜູ້ໃດກໍຕາມທີ່ [ກ]ກັບໃຈ ແລະ
ມາຫາເຮົາຄືກັນກັບ [ຂ]ເດັກນ້ອຍ, ເຮົາຈະ
ຮັບຜູ້ນັ້ນໄວ້ ເພາະອານາຈັກຂອງພຣະ
ເຈົ້າປະກອບດ້ວຍຄົນເຊັ່ນນັ້ນ. ຈົ່ງເບິ່ງ,
ເພາະຄົນເຊັ່ນນັ້ນທີ່ເຮົາໄດ້ [ຄ]ສະລະຊີວິດ
ຂອງເຮົາແທນ, ແລະ ຮັບເອົາຊີວິດນັ້ນຄືນ
ອີກ; ສະນັ້ນ ຈົ່ງກັບໃຈ, ແລະ ມາຫາເຮົາ
ເຈົ້າທັງຫລາຍທີ່ສຸດຂອງແຜ່ນດິນໂລກ,
ແລະ ລອດ.

15 *ກ* ຢຮ 1:1–3; ກລຊ 1:16; ຣລມ 14:12; ອທ 4:7; ຄພ 14:9.
*ຂ* ຢຮ 17:20–22; 3 ນຟ 11:27; 19:23, 29.
16 *ກ* ຢຮ 1:11; ຄພ 6:21.
17 *ກ* ຢຮ 1:12. ຄມພ ບຸດ ແລະ ທິດາຂອງພຣະເຈົ້າ; ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ.
*ຂ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຄ* 3 ນຟ 12:19, 46–47; 15:2–9.
18 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ພນມ 1:8. ຄມພ ອາລະຟາ ແລະ ໂອເມຄາ.
19 *ກ* ແອວ 34:13.
20 *ກ* 3 ນຟ 12:19; ຄພ 20:37.
*ຂ* 2 ນຟ 31:13–14.
22 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ມຣກ 10:15; ມຊຢ 3:19; 3 ນຟ 11:37–38.
*ຄ* ຢຮ 10:15–18.

## ບົດທີ 10

*ມັນມີຄວາມງຽບສະຫງັດໃນແຜ່ນດິນເປັນເວລາຫລາຍ ຊົ່ວ ໂມງ—ສຸ ລະ ສຽງຂອງພຣະຄຣິດສັນຍາວ່າຈະເຕົ້າ ໂຮມຜູ້ຄົນຂອງພຣະອົງເໝືອນດັ່ງແມ່ໄກ່ເຕົ້າໂຮມລູກຂອງມັນ—ຄົນທີ່ຊອບທຳຫລາຍກວ່າໄດ້ຖືກຮັກສາໄວ້. ປະມານ ຄ.ສ. 34–35.*

1 ແລະ ບັດ ນີ້ ຈົ່ງ ເບິ່ງ, ເຫດ ການ ໄດ້
ບັງເກີດຂຶ້ນຄື ຜູ້ຄົນທັງໝົດໃນແຜ່ນດິນ
ໄດ້ຍິນຂໍ້ຄວາມເຫລົ່ານີ້, ແລະ ໄດ້ເປັນ
ພະຍານໃນເລື່ອງນີ້. ແລະ ຫລັງຈາກຂໍ້
ຄວາມເຫລົ່ານີ້ຈົບລົງແລ້ວ ມັນໄດ້ມີຄວາມ
ງຽບສະຫງັດໃນແຜ່ນດິນເປັນເວລາຫລາຍ
ຊົ່ວໂມງ;
2 ເພາະຜູ້ຄົນມີຄວາມແປກໃຈຫລາຍທີ່
ສຸດ ເຖິງຂະໜາດທີ່ພວກເຂົາຢຸດຮ້ອງໄຫ້
ແລະ ຢຸດຄວນຄາງນຳການສູນເສຍຍາດ
ພີ່ນ້ອງຜູ້ທີ່ຖືກຂ້າຕາຍ; ສະນັ້ນ ມັນຈຶ່ງໄດ້
ມີຄວາມງຽບສະຫງັດໃນແຜ່ນດິນທັງໝົດ
ເປັນເວລາຫລາຍຊົ່ວໂມງ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີສຸ
ລະສຽງມາຫາຜູ້ຄົນອີກ, ແລະ ພວກເຂົາ
ທຸກຄົນໄດ້ຍິນ, ແລະ ໄດ້ເປັນພະຍານເຖິງ
ສຽງນັ້ນ, ມີຄວາມວ່າ:
4 ໂອ້ ເຈົ້າຜູ້ເປັນພົນລະເມືອງຂອງເມືອງ
[ກ]ໃຫຍ່ເຫລົ່ານີ້ ຊຶ່ງຕົກໄປແລ້ວ ຊຶ່ງເປັນຜູ້
ສືບເຊື້ອສາຍຂອງຢາໂຄບ, ແທ້ຈິງແລ້ວ,
ຜູ້ເປັນເຊື້ອສາຍອິດສະຣາເອນ, ຈັກເທື່ອ
ແລ້ວທີ່ເຮົາໄດ້ເຕົ້າໂຮມເຈົ້າດັ່ງແມ່ໄກ່ເຕົ້າ
ໂຮມລູກຂອງມັນໄວ້ໃຕ້ປີກຂອງມັນ, ແລະ
[ຂ]ບຳລຸງລ້ຽງເຈົ້າ.
5 ແລະ ອີກເທື່ອໜຶ່ງ, [ກ]ຈັກເທື່ອແລ້ວ ທີ່
ເຮົາໄດ້ເຕົ້າໂຮມເຈົ້າດັ່ງແມ່ໄກ່ເຕົ້າໂຮມ
ລູກຂອງມັນໄວ້ໃຕ້ປີກຂອງມັນ, ແທ້ຈິງ
ແລ້ວ, ໂອ້ ເຈົ້າຜູ້ເປັນເຊື້ອສາຍອິດສະ
ຣາເອນ, ຜູ້ຕົກໄປ; ແທ້ຈິງແລ້ວ, ໂອ້ ເຈົ້າ
ຜູ້ເປັນເຊື້ອສາຍອິດສະຣາເອນ, ເຈົ້າຜູ້ທີ່ຢູ່
ໃນເຢຣູຊາເລັມ, ເຈົ້າຕົກໄປແລ້ວ; ແທ້ຈິງ
ແລ້ວ, ຈັກເທື່ອແລ້ວທີ່ເຮົາໄດ້ເຕົ້າໂຮມເຈົ້າ
ດັ່ງແມ່ໄກ່ເຕົ້າໂຮມລູກຂອງມັນໄວ້ໃຕ້ປີກ
ຂອງມັນ, ແລະ ເຈົ້າບໍ່ຍິນຍອມ.
6 ໂອ້ ເຈົ້າ ເຊື້ອສາຍ ອິດສະຣາເອນ ຜູ້
ທີ່ເຮົາ [ກ]ໄວ້ຊີວິດ, ເຮົາຈະເຕົ້າໂຮມເຈົ້າ
ຫລາຍໆເທື່ອດັ່ງແມ່ໄກ່ເຕົ້າໂຮມລູກຂອງ
ມັນໄວ້ໃຕ້ປີກຂອງມັນ, ຖ້າຫາກເຈົ້າຈະກັບ
ໃຈ ແລະ [ຂ]ຫັນມາຫາເຮົາດ້ວຍຈຸດປະສົງ
ເຕັມທີ່ແຫ່ງ [ຄ]ໃຈ.
7 ຖ້າ ບໍ່ ດັ່ງນັ້ນ, ໂອ້ ເຊື້ອ ສາຍ ອິດສະ
ຣາເອນເອີຍ ບ່ອນຢູ່ຂອງເຈົ້າຈະກາຍເປັນ
ບ່ອນຮົກຮ້າງຈົນກວ່າຈະຮອດເວລາແຫ່ງ
[ກ]ພັນທະສັນຍາທີ່ເຮັດໄວ້ກັບບັນພະບຸລຸດ
ຂອງເຈົ້າສຳເລັດຄົບຖ້ວນ.
8 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກຜູ້ຄົນໄດ້ຍິນຂໍ້ຄວາມນີ້ແລ້ວ, ຈົ່ງ
ເບິ່ງ, ພວກເຂົາໄດ້ເລີ່ມຮ້ອງໄຫ້ ແລະ ຄວນ
ຄາງຕື່ມອີກເພາະການສູນເສຍຍາດພີ່ນ້ອງ
ແລະ ເພື່ອນຝູງຂອງພວກເຂົາ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ສາມ
ມື້ໄດ້ຜ່ານໄປ. ແລະ ເວລາຕອນເຊົ້າມື້ໃໝ່
ມາ [ກ]ຄວາມມືດໄດ້ກະຈາຍໄປຈາກພື້ນ
ແຜ່ນດິນ, ແລະ ແຜ່ນດິນໂລກໄດ້ເຊົາສັ່ນ
ສະເທືອນ, ແລະ ຫີນກໍເຊົາແຕກ, ແລະ
ສຽງຄວນຄາງອັນເປັນໜ້າຢ້ານກົວກໍໄດ້

**10** 4*ກ* 3 ນຟ 8:14.
*ຂ* 1 ນຟ 17:3.
5*ກ* ມທ 23:37;
ຄພ 43:24–25.
6*ກ* 3 ນຟ 9:13.
*ຂ* 1 ຊມອ 7:3;
ຣລມ 13:11;
3 ນຟ 24:7.
*ຄ* ອຊກ 36:26.
7*ກ* ຄມພ ພັນທະສັນຍາ.
9*ກ* 3 ນຟ 8:19.

ມິດງຽບລົງ, ແລະ ສຽງກືກກ້ອງທັງໝົດກໍ
ໄດ້ຜ່ານໄປ.
10 ແລະ ແຜ່ນດິນໂລກໄດ້ຕໍ່ເຂົ້າກັນອີກ
ຄືຕັ້ງໝັ້ນຢູ່; ແລະ ຄວາມໂສກເສົ້າ, ແລະ
ການຮ້ອງໄຫ້, ແລະ ການຄວນຄາງຂອງ
ຜູ້ຄົນຜູ້ທີ່ລອດຕາຍໄດ້ມິດງຽບລົງ; ແລະ
ຄວາມໂສກເສົ້າຂອງພວກເຂົາໄດ້ປ່ຽນ
ເປັນຄວາມສຸກ, ແລະ ການຄໍ່າຄວນຂອງ
ພວກເຂົາໄດ້ປ່ຽນເປັນການສັນລະເສີນ,
ແລະ ຂອບພຣະໄທແດ່ອົງພຣະເຢຊູຄຣິດ
ເຈົ້າ, ພຣະຜູ້ໄຖ່ຂອງພວກເຂົາ.
11 ແລະ ພຣະຄໍາໄດ້ [ກ]ສໍາເລັດປານນີ້
ດັ່ງທີ່ສາດສະດາທັງຫລາຍໄດ້ເວົ້າໄວ້.
12 ແລະ ຜູ້ທີ່ມີຊີວິດຢູ່ນັ້ນແມ່ນຜູ້ທີ່ຊອບ
ທໍາ [ກ]ຫລາຍກວ່າ, ແລະ ແມ່ນຜູ້ທີ່ໄດ້ຕ້ອນ
ຮັບສາດສະດາ ແລະ ບໍ່ໄດ້ແກວ່ງກ້ອນຫີນ
ໃສ່ພວກເພິ່ນ; ແລະ ມັນແມ່ນພວກທີ່ບໍ່ໄດ້
ນອງເລືອດໄພ່ພົນຂອງພຣະເຈົ້າທີ່ໄດ້ຮັບ
ການໄວ້ຊີວິດ—
13 ແລະ ພວກເຂົາໄດ້ຮັບການຍົກເວັ້ນ
ແລະ ບໍ່ໄດ້ຈົມລົງ ແລະ ບໍ່ໄດ້ຖືກຝັງໄວ້ຢູ່
ໃນແຜ່ນດິນໂລກ; ແລະ ພວກເຂົາບໍ່ໄດ້ຈົມ
ຢູ່ໃນຄວາມເລິກຂອງທະເລ; ແລະ ພວກ
ເຂົາບໍ່ໄດ້ຖືກໄຟເຜົາ, ທັງບໍ່ໄດ້ຖືກທັບ
ແລະ ບໍ່ໄດ້ຖືກບົດໃຫ້ຕາຍ; ແລະ ພວກ
ເຂົາບໍ່ໄດ້ຖືກລົມບ້າໝູຫອບໄປ; ທັງບໍ່ໄດ້
ໝົດກໍາລັງດ້ວຍອາຍ ແລະ ຄວັນຂອງ
ຄວາມມືດ.
14 ແລະ ບັດນີ້, ຜູ້ໃດທີ່ອ່ານເລື່ອງນີ້ກໍຂໍ
ໃຫ້ຜູ້ນັ້ນເຂົ້າໃຈເຖີດ; ຜູ້ໃດທີ່ມີພຣະຄໍາພີກໍ
ຂໍໃຫ້ຜູ້ນັ້ນ [ກ]ຄົ້ນຄວ້າ ແລະ ເບິ່ງເອົາທ້ອນ,
ແລະ ຈົ່ງເບິ່ງ ຖ້າຫາກຄວາມຕາຍ ແລະ
ການທໍາລາຍທັງໝົດນີ້ດ້ວຍໄຟ ແລະ ດ້ວຍ
ຄວັນ, ແລະ ດ້ວຍພະຍຸຝົນຟ້າຄະນອງ,
ແລະ ດ້ວຍລົມບ້າໝູ, ແລະ ດ້ວຍ [ຂ]ການ
ແຕກແຍກຂອງແຜ່ນດິນໂລກ ເພື່ອດູດເອົາ
ພວກເຂົາໄປ, ແລະ ສິ່ງທັງໝົດນີ້ບໍ່ໄດ້ເປັນ
ໄປເພື່ອໃຫ້ຄໍາທໍານາຍຂອງສາດສະດາຜູ້ບໍ
ລິສຸດຫລາຍທ່ານສໍາເລັດ.
15 ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ,
ແທ້ຈິງແລ້ວ, ຫລາຍຄົນໄດ້ໃຫ້ຖ້ອຍຄໍາ
ກ່ຽວກັບເລື່ອງເຫລົ່ານີ້ເວລາພຣະຄຣິດສະ
ເດັດມາ, ແລະ ຖືກ [ກ]ຂ້າຕາຍເພາະພວກ
ເພິ່ນໄດ້ໃຫ້ຖ້ອຍຄໍາກ່ຽວກັບເລື່ອງເຫລົ່ານີ້.
16 ແທ້ຈິງແລ້ວ, ສາດສະດາ [ກ]ຊີນັດໄດ້
ໃຫ້ຖ້ອຍຄໍາກ່ຽວກັບເລື່ອງເຫລົ່ານີ້, ແລະ ຊີ
ໂນກກໍໄດ້ເວົ້າກ່ຽວກັບເລື່ອງເຫລົ່ານີ້ຄືກັນ,
ເພາະພວກເພິ່ນໄດ້ໃຫ້ຖ້ອຍຄໍາໂດຍສະ
ເພາະກ່ຽວກັບພວກເຮົາຜູ້ເປັນລູກຫລານທີ່
ເຫລືອຢູ່ຂອງພວກເພິ່ນ.
17 ຈົ່ງເບິ່ງ, ຢາໂຄບຜູ້ເປັນບັນພະບຸ
ລຸດຂອງພວກເຮົາກໍໄດ້ໃຫ້ຖ້ອຍຄໍາກ່ຽວ
ກັບລູກຫລານ [ກ]ທີ່ເຫລືອຢູ່ຂອງໂຢເຊັບ
ຄືກັນ. ແລະ ຈົ່ງເບິ່ງ, ແລ້ວພວກເຮົາບໍ່
ແມ່ນລູກຫລານທີ່ເຫລືອຢູ່ຂອງໂຢເຊັບບໍ?
ແລະ ເລື່ອງລາວເຫລົ່ານີ້ ຊຶ່ງໄດ້ໃຫ້ຖ້ອຍ
ຄໍາກ່ຽວກັບພວກເຮົາບໍ່ໄດ້ຖືກຂຽນໄວ້ໃນ
ແຜ່ນຈາລຶກທອງເຫລືອງບໍ ຊຶ່ງລີໄຮຜູ້ເປັນ
ບັນພະບຸລຸດຂອງພວກເຮົາໄດ້ນໍາອອກມາ
ຈາກເຢຣູຊາເລັມນັ້ນ?
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ທ້າຍປີທີສາມສິບສີ່ຄື, ຈົ່ງເບິ່ງ, ຂ້າພະເຈົ້າ

11 *ກ* ກຈກ 3:18–20.
12 *ກ* 2 ນຟ 26:8; 3 ນຟ 9:13.
14 *ກ* ຄມພ ພຣະຄໍາພີ—ຄຸນຄ່າຂອງພຣະຄໍາພີ.
*ຂ* 1 ນຟ 19:11; 2 ນຟ 26:5.
15 *ກ* ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
16 *ກ* ຮລມ 8:19–20.
17 *ກ* 2 ນຟ 3:4–5; ແອວ 46:24; 3 ນຟ 5:23–24.

ຈະ ສະແດງ ໃຫ້ ທ່ານ ເຫັນ ວ່າ ຜູ້ ຄົນ ຂອງ
ນີໄຟທີ່ລອດຕາຍ, ແລະ ລວມທັງຜູ້ທີ່ມີຊື່
ວ່າ ຊາວເລມັນທີ່ລອດຕາຍ ໄດ້ຮັບ ຄວາມ
ໂປດປານ ແລະ ພອນອັນຍິ່ງໃຫຍ່ຫລັ່ງລົງ
ມາເທິງຫົວຂອງພວກເຂົາ, ເຖິງຂະໜາດທີ່
ບໍ່ດົນຫລັງຈາກ ກການສະເດັດຂຶ້ນສະຫວັນ
ຂອງພຣະຄຣິດ ພຣະອົງໄດ້ສະແດງພຣະ
ອົງເອງໃຫ້ປະຈັກແກ່ພວກເຂົາແທ້ໆ—
19 ກໂດຍປະກົດຕົວແກ່ພວກເຂົາ ແລະ
ປະຕິບັດສາດສະໜາກິດ ແກ່ພວກ ເຂົາ;
ແລະ ເລື່ອງລາວກ່ຽວກັບການປະຕິບັດ
ສາດສະໜາກິດຂອງພຣະອົງຈະມີກ່າວ
ເຖິງຕໍ່ໄປຈາກນີ້. ສະນັ້ນ ສຳລັບເວລານີ້
ຂ້າພະເຈົ້າຂໍຈົບຄຳເວົ້າຂອງຂ້າພະເຈົ້າ.

---

ພຣະເຢຊູຄຣິດໄດ້ມາປະກົດຕົວແກ່ຜູ້ຄົນ
ຂອງນີໄຟ ໃນຂະນະທີ່ຝູງຊົນກຳລັງເຕົ້າ
ໂຮມກັນຢູ່ໃນແຜ່ນດິນອຸດົມສົມບູນ, ແລະ
ໄດ້ປະຕິບັດສາດສະໜາກິດແກ່ພວກເຂົາ;
ແລະ ໂດຍວິທີນີ້ພຣະອົງໄດ້ປະກົດແກ່
ພວກເຂົາ.

*ມີຢູ່ໃນບົດທີ 11 ຈົນເຖິງບົດທີ 26.*

## ບົດທີ 11

*ພຣະບິດາໃຫ້ຖ້ອຍຄຳເຖິງບຸດທີ່ຮັກຂອງ
ພຣະອົງ—ພຣະຄຣິດມາປະກົດ ແລະ ປະ
ກາດການຊົດໃຊ້ຂອງພຣະອົງ—ຝູງຊົນໄດ້
ລູບຄຳຮອຍຢູ່ໃນພຣະຫັດ ແລະ ພຣະບາດ
ແລະ ຢູ່ໃນຂ້າງຂອງພຣະອົງ—ພວກເຂົາ
ຮ້ອງໂຮ ໂຮຊັນນາ—ພຣະອົງຈັດຕັ້ງແບບ
ແຜນບັບຕິສະມາ—ວິນຍານແຫ່ງການຂັດ
ແຍ້ງກັນມາຈາກມານ—ຄຳສອນຂອງພຣະ
ຄຣິດຄື ມະນຸດຄວນເຊື່ອ ແລະ ຮັບບັບຕິ
ສະມາ ແລະ ຮັບເອົາພຣະວິນຍານບໍລິສຸດ.
ປະມານ ຄ.ສ. 34.*

1 ແລະ ບັດນີ້ເຫດການ ໄດ້ບັງເກີດຂຶ້ນ
ຄື ມັນໄດ້ມີຊາວນີໄຟເປັນຈຳນວນຫລວງ
ຫລາຍມາເຕົ້າໂຮມກັນຢູ່ອ້ອມຮອບບໍລິ
ເວນພຣະວິຫານ ຊຶ່ງຕັ້ງຢູ່ໃນແຜ່ນດິນອຸດົມ
ສົມບູນ; ແລະ ພວກເຂົາກຳລັງອັດສະຈັນ
ໃຈ ແລະ ງຶດງໍ້ກັນຢູ່, ແລະ ກຳລັງບອກກັນ
ເຖິງຄວາມປ່ຽນແປງ ກອັນຍິ່ງໃຫຍ່ ແລະ
ໜ້າອັດສະຈັນຊຶ່ງໄດ້ເກີດຂຶ້ນ.
2 ແລະ ພວກເຂົາກຳລັງເວົ້າເຖິງພຣະ
ເຢຊູຄຣິດນີ້ຢູ່, ຜູ້ຊຶ່ງມີ ກເຄື່ອງໝາຍໃຫ້ໄວ້
ກ່ຽວກັບການສິ້ນພຣະຊົນຂອງພຣະອົງ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ພວກເຂົາກຳລັງສົນທະນາກັນຢູ່
ນັ້ນ, ພວກເຂົາໄດ້ຍິນ ກສຽງດັງຂຶ້ນຄືກັນ
ກັບວ່າ ມັນດັງມາຈາກຟ້າສະຫວັນ ແລະ
ພວກເຂົາໄດ້ກວາດສາຍຕາໄປຮອບໆ
ເພາະວ່າພວກເຂົາບໍ່ເຂົ້າໃຈສຽງທີ່ພວກ
ເຂົາໄດ້ຍິນນັ້ນເລີຍ, ແລະ ມັນບໍ່ແມ່ນສຽງ
ໂຫດຫ້ຽມ ແລະ ທັງບໍ່ແມ່ນສຽງດັງ; ເຖິງ
ຢ່າງໃດກໍຕາມ, ແລະ ທັງໆທີ່ມັນເປັນສຽງ
ຂເບົາ ປານນັ້ນມັນກໍຍັງໄດ້ສຽບແທງເຂົ້າ
ຈົນເຖິງກາງໃຈ, ເຖິງຂະໜາດທີ່ບໍ່ມີສ່ວນ
ໃດຂອງຮ່າງກາຍຂອງພວກເຂົາທີ່ສຽງນັ້ນ
ຈະບໍ່ເຮັດໃຫ້ສັ່ນໄດ້; ແທ້ຈິງແລ້ວ, ມັນໄດ້
ສຽບແທງພວກເຂົາຈົນເຖິງຮອດຈິດວິນ
ຍານທຸກສ່ວນ, ແລະ ໄດ້ເຮັດໃຫ້ໃຈຂອງ
ພວກເຂົາຮ້ອນໄໝ້.

18*ກ* ກຈກ 1:9–11.
19*ກ* 3 ນຟ 11:12–15.
**11** 1*ກ* 3 ນຟ 8:11–14.
2*ກ* ຣລມ 14:20–27.
3*ກ* ພບຍ 4:33–36;
ຣລມ 5:29–33.
*ຂ* 1 ກສ 19:11–13;
ຄພ 85:6.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຍິນສຽງນັ້ນອີກ, ແລະ ພວກເຂົາບໍ່ເຂົ້າໃຈມັນ.

5 ແລະ ພວກ ເຂົາ ໄດ້ ຍິນ ສຽງ ນັ້ນ ອີກ ເປັນ ເທື່ອທີສາມ, ແລະ ໄດ້ງ່ຽງຫູຟັງ ແລະ ຕາຂອງພວກເຂົາຫລຽວໄປທາງສຽງນັ້ນ; ແລະ ພວກເຂົາໄດ້ແນມຂຶ້ນຟ້າສະຫວັນ, ເພາະສຽງດັງມາຈາກບ່ອນນັ້ນ.

6 ແລະ ຈົ່ງເບິ່ງ, ເທື່ອທີສາມພວກເຂົາຈຶ່ງເຂົ້າໃຈສຽງທີ່ພວກເຂົາໄດ້ຍິນນັ້ນ; ແລະ ມັນກ່າວກັບພວກເຂົາວ່າ:

7 ຈົ່ງເບິ່ງ [ກ]ບຸດທີ່ຮັກຂອງເຮົາເຖີດ, [ຂ]ໃນຜູ້ເຮົາພໍໃຈຫລາຍ, ໃນຜູ້ທີ່ສັນລະເສີນພຣະນາມຂອງເຮົາ—ຈົ່ງຟັງທ່ານ.

8 ແລະ ເຫດການໄດ້ບັງເກີດຂຶ້ນ, ເມື່ອພວກເຂົາເຂົ້າໃຈຄຳເວົ້ານັ້ນ ພວກເຂົາຈຶ່ງໄດ້ກວາດສາຍຕາຂຶ້ນໄປຟ້າສະຫວັນອີກ; ແລະ ຈົ່ງເບິ່ງ, ພວກເຂົາ [ກ]ໄດ້ເຫັນຊາຍຄົນໜຶ່ງລົງມາຈາກສະຫວັນ; ແລະ ພຣະອົງໄດ້ສວມເສື້ອຄຸມສີຂາວ; ແລະ ພຣະອົງໄດ້ລົງມາຢືນຢູ່ທ່າມກາງພວກເຂົາ; ແລະ ຕາຂອງຝູງຊົນທັງໝົດຈົດຈໍ່ຢູ່ທີ່ພຣະອົງ, ແລະ ພວກເຂົາບໍ່ກ້າທີ່ຈະເປີດປາກ, ທັງບໍ່ກ້າສິ່ມກັນ, ແລະ ບໍ່ຮູ້ວ່າມັນໝາຍຄວາມວ່າແນວໃດ ເພາະພວກເຂົາຄິດວ່າ ພຣະອົງເປັນທູດທີ່ມາປະກົດຕໍ່ພວກເຂົາ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະອົງໄດ້ເດ່ພຣະຫັດອອກໄປ ແລະ ເວົ້າກັບຜູ້ຄົນ, ມີຄວາມວ່າ:

10 ຈົ່ງເບິ່ງ, ເຮົາຄືພຣະເຢຊູຄຣິດ, ຜູ້ທີ່ສາດສະດາໄດ້ໃຫ້ຖ້ອຍຄຳວ່າຈະມາຍັງໂລກນີ້.

11 ແລະ ຈົ່ງເບິ່ງ, ເຮົາເປັນ [ກ]ຄວາມສະຫວ່າງ ແລະ ຊີວິດຂອງໂລກ; ແລະ ເຮົາໄດ້ດື່ມຈາກ [ຂ]ຈອກອັນຂົມຂື່ນ ຊຶ່ງພຣະບິດາໄດ້ປະທານໃຫ້ເຮົາແລ້ວ, ແລະ ຖວາຍບາລະມີພຣະບິດາໂດຍ [ຄ]ຮັບເອົາບາບຂອງໂລກມາໄວ້ກັບເຮົາ, ຊຶ່ງໃນເລື່ອງນີ້ ເຮົາໄດ້ຍອມປະຕິບັດຕາມ [ງ]ພຣະປະສົງຂອງພຣະບິດາໃນທຸກສິ່ງທຸກຢ່າງ ຕັ້ງແຕ່ຕົ້ນມາ.

12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມນີ້ແລ້ວ ຝູງຊົນທັງໝົດກໍໄດ້ລົ້ມລົງຢູ່ກັບພື້ນດິນ; ເພາະພວກເຂົາຈື່ໄດ້ວ່າ ມັນມີ [ກ]ທຳນາຍໄວ້ແລ້ວໃນບັນດາພວກເຂົາວ່າ ພຣະຄຣິດຈະສະເດັດມາຫາພວກເຂົາດ້ວຍຕົວພຣະອົງເອງ ຫລັງຈາກທີ່ພຣະອົງໄດ້ສະເດັດຂຶ້ນສະຫວັນແລ້ວ.

13 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ພຣະ ຜູ້ ເປັນ ເຈົ້າໄດ້ກ່າວກັບພວກເຂົາມີຄວາມວ່າ:

14 ຈົ່ງ ລຸກ ຂຶ້ນ ແລະ ອອກ ມາ ຫາ ເຮົາເຖີດ, ເພື່ອເຈົ້າຈະ ໄດ້ [ກ]ເດ່ມືມາໃສ່ຂ້າງຂອງເຮົາ, ແລະ ເພື່ອເຈົ້າຈະໄດ້ [ຂ]ລູບຄຳຮອຍຕະປູທີ່ພຣະຫັດ ແລະ ທີ່ພຣະບາດຂອງເຮົານຳອີກ ເພື່ອເຈົ້າຈະໄດ້ຮູ້ວ່າ ເຮົາຄື [ຄ]ພຣະເຈົ້າຂອງອິດສະຣາເອນ ແລະ ພຣະເຈົ້າຂອງທັງ [ງ]ແຜ່ນດິນໂລກ, ແລະ ໄດ້ຖືກປະຫານເພື່ອບາບຂອງໂລກ.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ຝູງ

7 *ກ* ມທ 3:17; 17:5; ຈສ—ປ 1:17.
*ຂ* 3 ນຟ 9:15.
8 *ກ* 1 ນຟ 12:6; 2 ນຟ 26:1.
11 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ມທ 26:39, 42.
*ຄ* ຢຮ 1:29; ຄພ 19:18–19.
*ງ* ມຣກ 14:36; ຢຮ 6:38; ຄພ 19:2.
12 *ກ* ແອວ 16:20.
14 *ກ* ຢຮ 20:27.
*ຂ* ລກ 24:36–39; ຄພ 129:2.
*ຄ* ອຊຢ 45:3; 3 ນຟ 15:5.
*ງ* 1 ນຟ 11:6.

ຊົນໄດ້ອອກໄປ, ແລະ ໄດ້ເດ່ມືໄປໃສ່ຂ້າງ
ແລະ ໄດ້ລູບຄຳຮອຍຕະປູທີ່ພຣະຫັດ ແລະ
ພຣະບາດຂອງພຣະອົງ; ແລະ ພວກເຂົາ
ໄດ້ກະທຳສິ່ງນີ້ໂດຍການອອກໄປເທື່ອລະ
ຄົນ ຈົນວ່າພວກເຂົາໝົດທຸກຄົນໄດ້ອອກ
ໄປ ແລະ ໄດ້ເຫັນດ້ວຍຕາຂອງຕົນເອງ,
ແລະ ໄດ້ລູບຄຳດ້ວຍມືຂອງຕົນເອງ, ແລະ
ໄດ້ຮູ້ເຖິງຄວາມແນ່ນອນນີ້ ແລະ ໄດ້ເປັນ
ພະຍານວ່າ [ກ]ມັນແມ່ນພຣະອົງແທ້ໆ ຜູ້ທີ່
ສາດສະດາທັງຫລາຍໄດ້ຂຽນໄວ້ວ່າ ຈະ
ສະເດັດມາ.
16 ແລະ ຫລັງຈາກທີ່ພວກເຂົາທຸກຄົນ
ໄດ້ອອກໄປ ແລະ ໄດ້ເຫັນດ້ວຍຕາຂອງ
ຕົນເອງແລ້ວ, ພວກເຂົາໄດ້ຮ້ອງອອກມາ
ເປັນສຽງດຽວກັນ, ມີຄວາມວ່າ:
17 ໂຮຊັນນາ! ຂໍພຣະນາມຂອງພຣະ
ເຈົ້າຜູ້ສູງສຸດຈົ່ງພຣະກະເສີມສຳລານເຖີດ!
ແລ້ວພວກເຂົາກໍໄດ້ກາບລົງແທບພຣະ
ບາດຂອງພຣະເຢຊູ ແລະ ໄດ້ [ກ]ນະມັດ
ສະການພຣະອົງ.
18 ແລະ ເຫດການໄດ້ບັງເກີດຂຶ້ນ ຄື
ພຣະອົງໄດ້ກ່າວກັບ [ກ]ນີໄຟ (ເພາະວ່ານີໄຟ
ກໍໄດ້ຢູ່ໃນບັນດາຝູງຊົນນັ້ນ) ແລະ ພຣະອົງ
ໄດ້ບັນຊາໃຫ້ເພິ່ນອອກມາ.
19 ແລະ ນີໄຟໄດ້ລຸກຂຶ້ນ ແລະ ອອກໄປ,
ແລະ ກາບລົງຕໍ່ພຣະພັກຂອງພຣະຜູ້ເປັນ
ເຈົ້າ ແລະ ໄດ້ຈູບພຣະບາດຂອງພຣະອົງ.
20 ແລະ ພຣະຜູ້ເປັນເຈົ້າໄດ້ບັນຊາໃຫ້
ນີໄຟລຸກຂຶ້ນ. ແລະ ເພິ່ນກໍໄດ້ລຸກຂຶ້ນຢູ່ຕໍ່
ພຣະພັກຂອງພຣະອົງ.
21 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເພິ່ນວ່າ: ເຮົາມອບ [ກ]ອຳນາດແກ່ເຈົ້າເພື່ອ
ເຈົ້າຈະໄດ້ໃຫ້ [ຂ]ບັບຕິສະມາແກ່ຜູ້ຄົນພວກ
ນີ້ ເມື່ອເຮົາກັບຂຶ້ນສະຫວັນອີກ.
22 ແລະ ພຣະຜູ້ເປັນເຈົ້າໄດ້ເອີ້ນຄົນ
[ກ]ອື່ນໆມາອີກ, ແລະ ໄດ້ກ່າວກັບພວກເພິ່ນ
ໃນທຳນອງດຽວກັນ; ແລະ ພຣະອົງໄດ້
ປະທານອຳນາດໃຫ້ແກ່ພວກເພິ່ນ ເພື່ອຈະ
ໄດ້ໃຫ້ບັບຕິສະມາຄົນອື່ນ. ແລະ ພຣະອົງ
ໄດ້ກ່າວກັບພວກເພິ່ນວ່າ: ພວກເຈົ້າຈົ່ງໃຫ້
ບັບຕິສະມາຕາມວິທີນີ້ ແລະ ມັນຈະ [ຂ]ບໍ່ມີ
ການໂຕ້ຖຽງກັນໃນບັນດາພວກເຈົ້າ.
23 ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ, ຜູ້ໃດກໍຕາມທີ່ກັບໃຈຈາກ
ບາບຂອງຕົນຕາມ [ກ]ຄຳເວົ້າຂອງພວກເຈົ້າ,
ແລະ [ຂ]ປາດຖະໜາທີ່ຈະຮັບບັບຕິສະມາ
ໃນພຣະນາມຂອງເຮົາ, ພວກເຈົ້າຈົ່ງໃຫ້
ບັບຕິສະມາເຂົາຕາມວິທີນີ້—ຈົ່ງເບິ່ງ, ເຈົ້າ
ຈົ່ງລົງໄປ [ຄ]ຢືນຢູ່ໃນນ້ຳ, ແລະ ເຈົ້າຈົ່ງໃຫ້
ບັບຕິສະມາເຂົາໃນພຣະນາມຂອງເຮົາ.
24 ແລະ ບັດນີ້ຈົ່ງເບິ່ງ, ພວກເຈົ້າຈົ່ງກ່າວ
ຄຳເຫລົ່ານີ້ ໂດຍເອີ້ນຊື່ຂອງເຂົາ, ກ່າວວ່າ:
25 ໂດຍໄດ້ຮັບ [ກ]ສິດອຳນາດມອບໝາຍ
ຈາກພຣະເຢຊູຄຣິດ, ຂ້າພະເຈົ້າໃຫ້ບັບຕິ
ສະມາທ່ານໃນພຣະນາມຂອງ [ຂ]ພຣະບິດາ,
ແລະ ຂອງພຣະບຸດ, ແລະ ຂອງພຣະວິນ
ຍານບໍລິສຸດ. ອາແມນ.
26 ແລະ ຫລັງຈາກນັ້ນ ໃຫ້ພວກເຈົ້າ

15 ກ ຄມພ ພຣະເຢຊູຄຣິດ—ການປະກົດຕົວຂອງພຣະຄຣິດຫລັງຈາກຊີວິດມະຕະ.
17 ກ ຄມພ ນະມັດສະການ.
18 ກ 3 ນຟ 1:2, 10.
21 ກ ຄມພ ອຳນາດ.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
22 ກ 1 ນຟ 12:7; 3 ນຟ 12:1.
ຂ 3 ນຟ 18:34.
23 ກ 3 ນຟ 12:2.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ເງື່ອນໄຂສຳລັບການບັບຕິສະມາ.
ຄ 3 ນຟ 19:10–13.
25 ກ ມຊຍ 18:13; ຄພ 20:73. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ສິດອຳນາດທີ່ຖືກຕ້ອງ.
ຂ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.

[ກ]ຈຸ່ມເຂົາລົງໃນນ້ຳ, ແລະ ຂຶ້ນມາຈາກນ້ຳ
ອີກ.
27 ແລະ ຕາມວິທີນີ້ພວກເຈົ້າຈົ່ງໃຫ້
ບັບຕິສະມາໃນພຣະນາມຂອງເຮົາ; ເພາະ
ຈົ່ງເບິ່ງ, ຕາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າ, ວ່າພຣະບິດາ, ແລະ ພຣະບຸດ, ແລະ
ພຣະວິນຍານບໍລິສຸດເປັນ [ກ]ໜຶ່ງ; ແລະ ເຮົາ
ຢູ່ໃນພຣະບິດາ, ແລະ ພຣະບິດາຢູ່ໃນເຮົາ,
ແລະ ພຣະບິດາກັບເຮົາເປັນໜຶ່ງ.
28 ແລະ ຕາມທີ່ເຮົາສັ່ງພວກເຈົ້າ, ພວກ
ເຈົ້າຈົ່ງໃຫ້ບັບຕິສະມາ. ແລະ ມັນຈະບໍ່ມີ
ການໂຕ້ຖຽງກັນໃນບັນດາພວກເຈົ້າ, ດັ່ງທີ່
ເຄີຍມີມາກ່ອນ; ທັງຈະ [ກ]ບໍ່ມີການໂຕ້ຖຽງ
ກັນໃນບັນດາພວກເຈົ້າກ່ຽວກັບຄຳສອນ
ຂອງເຮົາ ດັ່ງທີ່ເຄີຍມີມາກ່ອນນັ້ນ.
29 ເພາະຕາມຈິງ, ຕາມຈິງແລ້ວເຮົາ
ກ່າວກັບພວກເຈົ້າ, ຜູ້ທີ່ມີ [ກ]ວິນຍານແຫ່ງ
[ຂ]ການຂັດແຍ້ງນັ້ນບໍ່ໄດ້ມາຈາກເຮົາ, ແຕ່
ມາຈາກມານ, ຜູ້ເປັນບິດາຂອງການຂັດ
ແຍ້ງ ແລະ ມັນໄດ້ຍຸຍົງໃຈຂອງມະນຸດໃຫ້
ຂັດແຍ້ງກັນດ້ວຍຄວາມຄຽດແຄ້ນ.
30 ຈົ່ງເບິ່ງ, ນີ້ບໍ່ແມ່ນຄຳສອນຂອງເຮົາ
ທີ່ຈະຍຸຍົງໃຈຂອງມະນຸດໃຫ້ມີຄວາມຄຽດ
ແຄ້ນຕໍ່ກັນ; ແຕ່ນີ້ເປັນຄຳສອນຂອງເຮົາຄື
ຄວນໃຫ້ເລື່ອງເຊັ່ນນັ້ນໝົດໄປ.
31 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບພວກເຈົ້າ, ເຮົາຈະປະກາດ [ກ]ຄຳ
ສອນຂອງເຮົາກັບພວກເຈົ້າ.
32 ແລະ ນີ້ຄື [ກ]ຄຳສອນຂອງເຮົາ, ແລະ
ມັນເປັນຄຳສອນ ຊຶ່ງພຣະບິດາໄດ້ປະທານ
ໃຫ້ແກ່ເຮົາ, ແລະ ເຮົາ [ຂ]ເປັນພະຍານເຖິງ
ພຣະບິດາ ແລະ ພຣະບິດາເປັນພະຍານ
ເຖິງເຮົາ, ແລະ [ຄ]ພຣະວິນຍານບໍລິສຸດເປັນ
ພະຍານເຖິງພຣະບິດາ ແລະ ເຖິງເຮົາ,
ແລະ ເຮົາເປັນພະຍານວ່າ ພຣະບິດາໄດ້
ບັນຊາໃຫ້ມະນຸດທັງປວງຢູ່ທຸກຫົນທຸກແຫ່ງ
ກັບໃຈ ແລະ ເຊື່ອໃນເຮົາ.
33 ແລະ ຜູ້ໃດກໍຕາມທີ່ເຊື່ອໃນເຮົາ,
ແລະ ຮັບ [ກ]ບັບຕິສະມາ, ຜູ້ນັ້ນຈະ [ຂ]ລອດ;
ແລະ ເຂົາຈະເປັນຜູ້ທີ່ໄດ້ຮັບອານາຈັກ
ຂອງພຣະເຈົ້າເປັນ [ຄ]ມູນມໍລະດົກ.
34 ແລະ ຜູ້ໃດກໍຕາມທີ່ບໍ່ເຊື່ອໃນເຮົາ,
ແລະ ບໍ່ຮັບບັບຕິສະມາ, ຈະຕ້ອງອັບປະ
ໄທຍດ.
35 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ວ່ານີ້ຄືຄຳສອນຂອງເຮົາ ແລະ
ເຮົາເປັນພະຍານເຖິງມັນ ຊຶ່ງມາຈາກພຣະ
ບິດາ; ແລະ ຜູ້ໃດກໍຕາມທີ່ [ກ]ເຊື່ອໃນເຮົາ
ຍ່ອມເຊື່ອໃນພຣະບິດາຄືກັນ; ແລະ ຕໍ່ຜູ້
ນັ້ນພຣະບິດາຈະເປັນພະຍານເຖິງເຮົາ,
ເພາະພຣະອົງຈະສະເດັດມາຢ້ຽມຢາມຜູ້
ນັ້ນ [ຂ]ດ້ວຍໄຟ ແລະ ດ້ວຍ [ຄ]ພຣະວິນຍານ
ບໍລິສຸດ.
36 ແລະ ເມື່ອນັ້ນພຣະບິດາຈະເປັນ

26 ກ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ.
27 ກ ຢຮ 17:20–22; 3 ນຟ 28:10; ມມ 7:7; ຄພ 20:28.
28 ກ 1 ກຣທ 1:10; ອຟຊ 4:11–14; ຄພ 38:27.
29 ກ 2 ຕມທ 2:23–24; ມຊຍ 23:15. ຄມພ ຂັດແຍ້ງ, ການຂັດແຍ້ງ.
ຂ ປຈສ ອຟຊ 4:26 (ພາກທ້ອຍທ້າຍ); ມຊຍ 2:32–33.
31 ກ 2 ນຟ 31:2–21.
32 ກ ຄມພ ຄຳສອນຂອງພຣະຄຣິດ.
ຂ 1 ຢຮ 5:7.
ຄ 3 ນຟ 28:11; ອທ 5:4.
33 ກ ມຣກ 16:16. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ຈຳເປັນ.
ຂ ຄມພ ລອດ, ຄວາມລອດ.
ຄ ຄມພ ລັດສະໝີພາບຂອງຊັ້ນສູງ.
35 ກ ອທ 4:12.
ຂ 3 ນຟ 9:20; 12:2.
ຄ ຄມພ ພຣະວິນຍານບໍລິສຸດ.

ພະຍານເຖິງເຮົາ, ແລະ ພຣະວິນຍານບໍລິ
ສຸດຈະ ເປັນ ພະຍານ ເຖິງພຣະບິດາ ແລະ
ເຖິງເຮົາ; ເພາະວ່າພຣະບິດາກັບເຮົາ ແລະ
ພຣະວິນຍານບໍລິສຸດເປັນໜຶ່ງ.
37 ແລະ ເຮົາ ກ່າວ ກັບ ພວກ ເຈົ້າ ອີກ,
ພວກເຈົ້າຕ້ອງກັບ ໃຈ, ແລະ [ກ]ກາຍ ເປັນ
ເໝືອນດັ່ງເດັກນ້ອຍເສຍກ່ອນ, ແລະ ຮັບ
ບັບຕິສະມາໃນນາມຂອງເຮົາ, ຖ້າບໍ່ດັ່ງນັ້ນ
ພວກເຈົ້າຈະບໍ່ມີທາງທີ່ຈະໄດ້ຮັບສິ່ງເຫລົ່າ
ນີ້ໄດ້ເລີຍ.
38 ແລະ ເຮົາ ກ່າວ ກັບ ພວກ ເຈົ້າ ອີກ,
ພວກເຈົ້າຕ້ອງກັບໃຈ ແລະ ຮັບບັບຕິສະມາ
ໃນນາມຂອງເຮົາເສຍກ່ອນ, ແລະ ກາຍ
ເປັນເໝືອນດັ່ງເດັກນ້ອຍ, ຖ້າບໍ່ດັ່ງນັ້ນ ເຈົ້າ
ຈະບໍ່ມີທາງທີ່ຈະໄດ້ອານາຈັກຂອງພຣະ
ເຈົ້າມາເປັນມູນມໍລະດົກໄດ້ເລີຍ.
39 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ວ່ານີ້ຄືຄຳສອນຂອງເຮົາ, ແລະ
ຜູ້ໃດກໍຕາມທີ່ [ກ]ສ້າງຢູ່ໃນຄຳສອນນີ້ຍ່ອມ
ສ້າງຢູ່ເທິງດານຫີນຂອງເຮົາ ແລະ [ຂ]ປະຕູ
ນະລົກຈະເອົາຊະນະເຂົາບໍ່ໄດ້.
40 ແລະ ຜູ້ໃດ ກໍ ຕາມທີ່ຈະປະກາດ
ຫລາຍ ຫລື ໜ້ອຍໄປກວ່ານີ້, ແລະ ສະຖາ
ປະນາມັນຂຶ້ນເປັນຄຳສອນຂອງເຮົາ ຜູ້ນັ້ນ
ແຫລະມາຈາກຄວາມຊົ່ວ, ແລະ ບໍ່ໄດ້ສ້າງ
ຢູ່ເທິງດານຫີນຂອງເຮົາ, ແຕ່ເຂົາໄດ້ສ້າງຢູ່
ໃນຮາກຖານຂອງ [ກ]ດິນຊາຍ, ແລະ ປະຕູ
ນະລົກຈະເປີດຮັບຄົນເຊັ່ນນັ້ນເມື່ອນ້ຳມາ
ຖ້ວມ ແລະ ລົມພະຍຸພັດຕີ.
41 ສະນັ້ນ, ຈົ່ງອອກໄປຫາຜູ້ຄົນພວກ
ນີ້ເຖີດ ແລະ ປະກາດພຣະຄຳ ຊຶ່ງເຮົາໄດ້
ກ່າວໄປນັ້ນໃຫ້ເຖິງທີ່ສຸດຂອງແຜ່ນດິນ
ໂລກ.

## ບົດທີ 12

*ພຣະເຢຊູເອີ້ນ ແລະ ມອບໝາຍໜ້າທີ່ໃຫ້ສານຸສິດສິບສອງຄົນ—ພຣະອົງສິດສອນຊາວນີໄຟເໝືອນດັ່ງທີ່ພຣະອົງໄດ້ເທດສະໜາຢູ່ໂນນພູ—ພຣະອົງກ່າວຄຳບູລົມສຸກ—ຄຳສອນຂອງພຣະອົງຢູ່ເໜືອ ແລະ ສູງກວ່າກົດຂອງໂມເຊ—ມະນຸດຖືກບັນຊາໃຫ້ເປັນຄົນດີພ້ອມເໝືອນດັ່ງພຣະອົງ ແລະ ພຣະບິດາຂອງພຣະອົງເປັນ—ປຽບທຽບກັບ ມັດທາຍ 5. ປະມານ ຄ.ສ. 34.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ກັບ
ນີໄຟ ແລະ ກັບຄົນທີ່ໄດ້ຮັບການເອີ້ນ
ນັ້ນແລ້ວ, (ບັດນີ້ຈຳນວນຄົນທີ່ໄດ້ຮັບ
ການເອີ້ນ ແລະ ໄດ້ຮັບອຳນາດ ແລະ ສິດ
ອຳນາດເພື່ອໃຫ້ບັບຕິສະມານັ້ນມີຢູ່ [ກ]ສິບ
ສອງຄົນດ້ວຍກັນ) ແລະ ຈົ່ງເບິ່ງ, ພຣະອົງ
ໄດ້ເດ່ພຣະຫັດອອກໄປຫາຝູງຊົນ, ແລະ
ກ່າວຢ່າງດັງໆກັບພວກເຂົາ, ມີຄວາມວ່າ:
ເຈົ້າຍ່ອມ [ຂ]ເປັນສຸກຖ້າຫາກເຈົ້າຈະເອົາ
ໃຈໃສ່ຕໍ່ຖ້ອຍຄຳຂອງສິບສອງຄົນນີ້ ຊຶ່ງ
ເຮົາໄດ້ [ຄ]ເລືອກເອົາມາຈາກບັນດາພວກ
ເຈົ້າ ເພື່ອໃຫ້ປະຕິບັດສາດສະໜາກິດແກ່
ເຈົ້າ ແລະ ໃຫ້ເປັນຜູ້ຮັບໃຊ້ຂອງເຈົ້າ ແລະ
ເຮົາໄດ້ມອບອຳນາດໃຫ້ຜູ້ຄົນເຫລົ່ານີ້ ເພື່ອ
ພວກເຂົາຈະໄດ້ໃຫ້ບັບຕິສະມາເຈົ້າດ້ວຍ
ນ້ຳ ແລະ ຫລັງຈາກເຈົ້າໄດ້ຮັບບັບຕິສະມາ

37 *ກ* ມຣກ 10:15; ລກ 18:17; ມຊຢ 3:19; 3 ນຟ 9:22.
39 *ກ* ມທ 7:24–29; ຣລມ 5:12. ຄມພ ຫີນ.
*ຂ* 3 ນຟ 18:12–13.
40 *ກ* 3 ນຟ 14:24–27.
**12** 1 *ກ* 3 ນຟ 13:25.
*ຂ* ຄມພ ພອນ, ໃຫ້ພອນ, ເປັນພອນ.
*ຄ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.

ດ້ວຍ ນ້ຳ ແລ້ວ, ຈົ່ງ ເບິ່ງ, ເຮົາ ຈະ ໃຫ້ ບັບຕິ
ສະມາ ເຈົ້າ ດ້ວຍ ໄຟ ແລະ ດ້ວຍ ພຣະ ວິນ
ຍານບໍລິສຸດ; ສະນັ້ນ ເຈົ້າຍ່ອມເປັນສຸກຖ້າ
ຫາກ ເຈົ້າ ຈະ ເຊື່ອ ໃນ ເຮົາ ແລະ ຮັບບັບຕິ
ສະມາຫລັງຈາກທີ່ເຈົ້າໄດ້ເຫັນເຮົາ ແລະ ຮູ້
ວ່າເຮົາເປັນຢູ່.
2 ແລະ ອີກ ເທື່ອໜຶ່ງ, ຜູ້ທີ່ຈະ [ກ]ເຊື່ອ ໃນ
ຄຳ ເວົ້າ ຂອງ ເຈົ້າ ຈະ ເປັນ ສຸກ ຫລາຍ ກວ່າ
ນີ້ ເພາະວ່າເຈົ້າຈະ ໃຫ້ຖ້ອຍຄຳວ່າ ເຈົ້າໄດ້
ເຫັນເຮົາ, ແລະວ່າເຈົ້າຮູ້ວ່າເຮົາເປັນຢູ່. ແທ້
ຈິງແລ້ວ, ຜູ້ໃດທີ່ຈະເຊື່ອ ໃນຄຳ ເວົ້າຂອງ
ເຈົ້າ ແລະ [ຂ]ລົງມາສູ່ສ່ວນເລິກແຫ່ງຄວາມ
ຖ່ອມຕົວ ແລະ ຮັບບັບຕິສະມາຍ່ອມເປັນ
ສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບການມາຢ້ຽມ
ຢາມ [ຄ]ດ້ວຍໄຟ ແລະ ດ້ວຍພຣະວິນຍານ
ບໍລິສຸດ ແລະ ຈະໄດ້ຮັບການປົດບາບຂອງ
ຕົນ.
3 ແທ້ຈິງແລ້ວ, ຄົນທີ່ [ກ]ຍາກຈົນທາງວິນ
ຍານ ທີ່ [ຂ]ມາຫາເຮົາຍ່ອມເປັນສຸກ, ເພາະ
ວ່າອານາຈັກສະຫວັນຈະເປັນຂອງຜູ້ນັ້ນ.
4 ແລະ ອີກຢ່າງໜຶ່ງ, ຄົນທັງປວງທີ່ໂສກ
ເສົ້າຍ່ອມເປັນສຸກ, ເພາະວ່າເຂົາຈະໄດ້ຮັບ
ການປອບໃຈ.
5 ແລະ [ກ]ຄົນທີ່ອ່ອນ ໂຍນຍ່ອມເປັນສຸກ,
ເພາະ ວ່າ ເຂົາຈະ ໄດ້ຮັບ [ຂ]ແຜ່ນດິນ ໂລກ
ເປັນມູນມໍລະດົກ.
6 ແລະ ຄົນທັງປວງທີ່ [ກ]ຫິວ ແລະ [ຂ]ກະ
ຫາຍ [ຄ]ຄວາມ ຊອບ ທຳ ຍ່ອມ ເປັນ ສຸກ,
ເພາະ ວ່າ ເຂົາ ຈະ ເຕັມ ໄປ ດ້ວຍ ພຣະ ວິນ
ຍານບໍລິສຸດ.
7 ແລະ ຄົນທີ່ມີໃຈ [ກ]ເມດຕາຍ່ອມເປັນ
ສຸກ, ເພາະວ່າເຂົາຈະໄດ້ຮັບຄວາມເມດຕາ
ຕອບແທນ.
8 ແລະ ຄົນທັງປວງທີ່ມີໃຈ [ກ]ບໍລິສຸດຍ່ອມ
ເປັນສຸກ, ເພາະວ່າເຂົາຈະໄດ້ [ຂ]ເຫັນພຣະ
ເຈົ້າ.
9 ແລະ [ກ]ຄົນ ທັງ ປວງ ທີ່ ສ້າງ ຄວາມ
ສະຫງົບຍ່ອມເປັນສຸກ, ເພາະວ່າເຂົາຈະ
ຖືກເອີ້ນວ່າ [ຂ]ລູກຂອງພຣະເຈົ້າ.
10 ແລະ ຄົນ ທັງ ປວງ ທີ່ ຖືກ [ກ]ຂົ່ມເຫັງ
ເພາະ ເຫັນ ແກ່ພຣະ ນາມຂອງເຮົາຍ່ອມ
ເປັນສຸກ, ເພາະວ່າອານາຈັກສະຫວັນຈະ
ເປັນຂອງເຂົາ.
11 ແລະ ເຈົ້າຍ່ອມເປັນສຸກເມື່ອຄົນໝິ່ນ
ປະໝາດ ແລະ ຂົ່ມເຫັງເຈົ້າ ແລະ ກ່າວ
ຄວາມຊົ່ວນາໆປະການ, ແລະ ຫາຄວາມ
ຜິດໃສ່ເຈົ້າເພາະເຮົາ;
12 ເພາະເຈົ້າຈະມີຄວາມຊື່ນຊົມຢ່າງລົ້ນ
ເຫລືອ ແລະ ມີຄວາມຍິນດີຢ່າງຍິ່ງ, ເພາະ
[ກ]ລາງວັນຂອງເຈົ້າໃນສະຫວັນຈະໃຫຍ່ຍິ່ງ;
ເພາະສາດສະດາທີ່ຢູ່ມາກ່ອນເຈົ້າຖືກຂົ່ມ
ເຫັງເຊັ່ນນັ້ນ.
13 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ເຮົາບັນຊາເຈົ້າໃຫ້ເປັນ [ກ]ເກືອຂອງ

2 *ກ* ຄພ 46:13–14.
ຄມພ ເຊື່ອ, ຄວາມເຊື່ອ.
*ຂ* ອທ 4:13–15.
*ຄ* 3 ນຟ 11:35; 19:13.
3 *ກ* ຄພ 56:17–18.
ຄມພ ຖ່ອມຕົນ,
ຄວາມຖ່ອມຕົນ.
*ຂ* ມທ 11:28–30.
5 *ກ* ຣມ 12:16;
ມຊຢ 3:19.
ຄມພ ອ່ອນໂຍນ,
ຄວາມອ່ອນໂຍນ.
*ຂ* ຄມພ ແຜ່ນດິນໂລກ.
6 *ກ* 2 ນຟ 9:51;
ອນ 1:4.
*ຂ* ຢມຢ 29:13.
*ຄ* ສພສ 21:21.
7 *ກ* ຄມພ ເມດຕາ, ມີເມດ
ຕາ, ຄວາມເມດຕາ.
8 *ກ* ຄມພ ບໍລິສຸດ, ຜູ້ບໍລິ
ສຸດ, ຄວາມບໍລິສຸດ.
*ຂ* ຄພ 93:1.
9 *ກ* ຄມພ ຄົນທີ່ສ້າງ
ຄວາມສະຫງົບສຸກ.
*ຂ* ຄມພ ບຸດ ແລະ ທິດາ
ຂອງພຣະເຈົ້າ.
10 *ກ* ຄພ 122:5–9.
ຄມພ ຂົ່ມເຫັງ,
ການຂົ່ມເຫັງ.
12 *ກ* ອທ 12:4.
13 *ກ* ຄພ 101:39–40.
ຄມພ ເກືອ.

ໂລກ; ແຕ່ ຖ້າ ຫາກ ເກືອ ນັ້ນ ໝົດ ລົດ ເຄັມ
ຂອງມັນ ໂລກຈະໄດ້ຄວາມເຄັມຈາກໃສ?
ຈາກນັ້ນເກືອຈະບໍ່ມີປະໂຫຍດອັນໃດເລີຍ,
ແຕ່ຈະຖືກໂຍນຖິ້ມໃຫ້ຄົນຢຽບຍ່ຳເທົ່ານັ້ນ.
14 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ເຮົາບັນຊາໃຫ້ເຈົ້າເປັນແສງສະຫວ່າງ
ຂອງຜູ້ຄົນພວກນີ້. ເມືອງທີ່ຕັ້ງຢູ່ເທິງເນີນພູ
ຈະຖືກບັງລັບໄວ້ບໍ່ໄດ້.
15 ຈົ່ງເບິ່ງ, ຄົນຈະໃຕ້ [ກ]ທຽນ ແລ້ວເອົາ
ກະບຸງມາກວມໄວ້ບໍ? ບໍ່ເລີຍ, ມີແຕ່ຈະຕັ້ງ
ມັນໄວ້ເທິງບ່ອນຕັ້ງທຽນ ແລະ ມັນຈະສ່ອງ
ແຈ້ງໄປທົ່ວທຸກຄົນທີ່ຢູ່ໃນເຮືອນນັ້ນ.
16 ສະນັ້ນຈົ່ງໃຫ້ [ກ]ຄວາມສະຫວ່າງຂອງ
ເຈົ້າສ່ອງເຊັ່ນນັ້ນຕໍ່ໜ້າຜູ້ຄົນພວກນີ້, ເພື່ອ
ວ່າພວກເຂົາຈະເຫັນການດີຂອງເຈົ້າ ແລະ
ຖວາຍບາລະມີແດ່ພຣະບິດາຂອງເຈົ້າຜູ້
ສະຖິດຢູ່ໃນສະຫວັນ.
17 ຢ່າຄິດວ່າເຮົາມານີ້ເພື່ອລຶບລ້າງກົດ
ແລະ ຖ້ອຍຄຳຂອງສາດສະດາ. ເຮົາບໍ່ໄດ້
ມາເພື່ອລຶບລ້າງ ແຕ່ເຮົາມາເພື່ອເຮັດໃຫ້
ມັນສົມບູນ;
18 ເພາະຕາມຈິງແລ້ວ ເຮົາບອກເຈົ້າວ່າ
ແມ່ນ ແຕ່ຈຸດໜຶ່ງ ຫລື ຂີດໜຶ່ງກໍບໍ່ໄດ້ຕົກ
ຫລົ່ນໄປຈາກ [ກ]ກົດ, ແຕ່ໃນເຮົາ ມັນໄດ້ສົມ
ບູນແລ້ວທັງໝົດ.
19 ແລະ ຈົ່ງເບິ່ງ, ເຮົາໄດ້ມອບກົດ ແລະ
ພຣະບັນຍັດຂອງພຣະບິດາຂອງເຮົາໃຫ້
ແກ່ເຈົ້າ ເພື່ອເຈົ້າຈະໄດ້ເຊື່ອໃນເຮົາ, ແລະ
ເພື່ອ ເຈົ້າ ຈະ ກັບ ໃຈ ຈາກບາບຂອງເຈົ້າ,
ແລະ ເຂົ້າມາຫາເຮົາດ້ວຍ [ກ]ໃຈທີ່ຊອກຊ້ຳ
ແລະ ດ້ວຍວິນຍານທີ່ສຳນຶກຜິດ. ຈົ່ງເບິ່ງ,
ເຈົ້າມີພຣະບັນຍັດຢູ່ຕໍ່ໜ້າເຈົ້າ, ແລະ [ຂ]ກົດ
ສົມບູນແລ້ວ.
20 ສະນັ້ນ ຈົ່ງມາຫາເຮົາ ແລະ ເຈົ້າຈະ
ລອດ; ເພາະເຮົາບອກກັບເຈົ້າຕາມຈິງ, ວ່າ
ຖ້າຫາກເຈົ້າຈະບໍ່ຮັກສາບັນຍັດຂອງເຮົາ
ຊຶ່ງເຮົາບັນຊາເຈົ້າໃນເວລານີ້ ບໍ່ວ່າໃນກໍ
ລະນີໃດກໍຕາມ, ເຈົ້າຈະເຂົ້າໄປໃນອານາ
ຈັກສະຫວັນບໍ່ໄດ້.
21 ເຈົ້າໄດ້ຍິນຄຳເວົ້າ ຊຶ່ງກ່າວໄວ້ໃນສະ
ໄໝບູຮານ ແລະ ມີຂຽນໄວ້ຕໍ່ໜ້າເຈົ້າອີກ,
ວ່າຢ່າຂ້າຄົນ, ແລະ ຜູ້ໃດກໍຕາມທີ່ [ກ]ຂ້າຄົນ
ຜູ້ນັ້ນຈະຕ້ອງຖືກພິພາກສາລົງໂທດໂດຍ
ພຣະເຈົ້າ;
22 ແຕ່ເຮົາບອກເຈົ້າວ່າ ຜູ້ໃດກໍຕາມທີ່
ຄຽດແຄ້ນໃຫ້ອ້າຍນ້ອງຂອງຕົນ ຜູ້ນັ້ນຈະ
ຖືກພິພາກສາລົງໂທດຈາກສານຂອງພຣະ
ອົງ. ແລະ ຜູ້ໃດກໍຕາມທີ່ຈະເວົ້າກັບອ້າຍ
ນ້ອງຂອງຕົນວ່າ, ຄົນໂງ່ຈ້າ, ຜູ້ນັ້ນຈະຖືກ
ພິພາສາລົງໂທດຈາກສານສູງສຸດ, ແລະ ຜູ້
ໃດກໍຕາມທີ່ຈະເວົ້າວ່າ, ຄົນບ້າ, ຜູ້ນັ້ນຈະມີ
ໂທດເຖິງໄຟນະລົກ.
23 ສະນັ້ນ, ຖ້າຫາກເຈົ້າຈະມາຫາເຮົາ,
ຫລື ປາດຖະໜາທີ່ຈະມາຫາເຮົາ ແລະ ນຶກ
ຂຶ້ນໄດ້ວ່າເຈົ້າມີຂໍ້ຂຸ່ນເຄືອງກັບອ້າຍນ້ອງ
ຂອງເຈົ້າດ້ວຍເລື່ອງໃດເລື່ອງໜຶ່ງ—
24 ກໍ ໃຫ້ກັບ ໄປ [ກ]ຄືນ ດີ ກັບ ອ້າຍ ນ້ອງ
ຂອງເຈົ້າເສຍກ່ອນ, ແລ້ວຈຶ່ງມາຫາເຮົາ
ດ້ວຍຈຸດປະສົງເຕັມທີ່ແຫ່ງໃຈ, ແລະ ເຮົາ
ຈະຮັບເອົາເຈົ້າ.
25 ຈົ່ງຮີບປອງດອງກັບຄູ່ໂຈດຂອງເຈົ້າ
ໃນຂະນະທີ່ຢູ່ກາງທາງນຳກັນ, ຢ້ານວ່າຄູ່
ໂຈດຂອງເຈົ້າຈະມອບເຈົ້າໄວ້, ແລະ ເຈົ້າ
ຈະຖືກສົ່ງເຂົ້າຄຸກ.
26 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ເຈົ້າຈະອອກຈາກທີ່ນັ້ນບໍ່ໄດ້ຈົນກວ່າ

15 *ກ* ລກ 8:16.
16 *ກ* 3 ນຟ 18:24.
18 *ກ* ຄນພ ກົດຂອງໂມເຊ.
19 *ກ* 3 ນຟ 9:20.
ຄນພ ຫົວໃຈທີ່ຊອກຊ້ຳ.
*ຂ* 3 ນຟ 9:17.
21 *ກ* ອພຍ 20:13;
ມຊຢ 13:21; ຄພ 42:18.
24 *ກ* ຄນພ ອະໄພ, ໃຫ້ອະໄພ.

ເຈົ້າຈະໄດ້ໃຊ້ໜີ້ຈົນຄົບທຸກຊີໄນເສຍກ່ອນ.
ແລະ ໃນຂະນະທີ່ເຈົ້າຢູ່ໃນຄຸກນັ້ນ ເຈົ້າຈະ
ມີເງິນຈັກ [ກ]ຊີໄນບໍ່ທີ່ຈະເອົາມາເປັນຄ່າໄຖ່
ຕົວ? ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ບໍ່ເລີຍ.
27 ຈົ່ງ ເບິ່ງ, ຄົນ ໃນ ສະ ໄໝ ກ່ອນ ໄດ້
ຂຽນໄວ້ວ່າ, [ກ]ຢ່າຫລິ້ນຊູ້ສູ່ຜົວເມຍຜູ້ອື່ນ;
28 ແຕ່ເຮົາກ່າວກັບເຈົ້າວ່າ, ຜູ້ໃດກໍຕາມ
ທີ່ຫລຽວເບິ່ງແມ່ຍິງດ້ວຍ [ກ]ຄວາມໄຄ່ໃນຍິງ
ນັ້ນ, ຜູ້ນັ້ນກໍໄດ້ຫລິ້ນຊູ້ໃນໃຈຂອງຕົນແລ້ວ.
29 ຈົ່ງເບິ່ງ, ເຮົາໃຫ້ບັນຍັດແກ່ເຈົ້າ, ວ່າ
ຢ່າຍອມໃຫ້ເລື່ອງເຫລົ່ານີ້ເຂົ້າມາໃນ [ກ]ໃຈ
ຂອງເຈົ້າເລີຍ;
30 ເພາະວ່າ ມັນ ຈະ ເປັນ ການ ດີ ກວ່າ ທີ່
ເຈົ້າຈະປະຕິເສດຕົນຈາກສິ່ງເຫລົ່ານີ້, ຊຶ່ງ
ໃນການນີ້ເຈົ້າຈະໄດ້ແບກ [ກ]ໄມ້ກາງແຂນ
ຂອງເຈົ້າເອງ ແທນທີ່ເຈົ້າຈະຖືກໂຍນລົງສູ່
ນະລົກ.
31 ມັນມີຂຽນໄວ້, ວ່າຖ້າຜູ້ໃດກໍຕາມທີ່
ຈະປະຮ້າງເມຍຂອງຕົນ ກໍໃຫ້ເຮັດໜັງສື
[ກ]ຢ່າຮ້າງໃຫ້ນາງ.
32 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ວ່າຜູ້ໃດກໍຕາມທີ່ຈະ [ກ]ປະຖິ້ມເມຍ
ຂອງຕົນ ນອກຈາກເພາະຜິດຖານ [ຂ]ຫລິ້ນ
ຊູ້, ຍ່ອມເປັນເຫດໃຫ້ນາງ [ຄ]ມີຊູ້; ແລະ ຜູ້
ໃດທີ່ຈະແຕ່ງງານກັບນາງຊຶ່ງຖືກຢ່າ ຍ່ອມ
ເປັນຊູ້.
33 ແລະ ມັນ ມີ ຂຽນ ໄວ້ ອີກ ວ່າ, ຢ່າ
ສາບານ ເທັດ, ແຕ່ໃຫ້ປະຕິບັດ [ກ]ຄຳ
ສາບານຂອງເຈົ້າຕໍ່ພຣະຜູ້ເປັນເຈົ້າ;
34 ແຕ່ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າ, ຢ່າ [ກ]ສາບານເລີຍ; ທັງຢ່າອ້າງ
ສະຫວັນ, ເພາະວ່າມັນເປັນພຣະທີ່ນັ່ງຂອງ
ພຣະເຈົ້າ;
35 ຫລື ຢ່າອ້າງແຜ່ນດິນໂລກ, ເພາະວ່າ
ມັນເປັນທີ່ຮອງພຣະບາດຂອງພຣະອົງ;
36 ທັງຢ່າສາບານໂດຍອ້າງເຖິງຫົວຂອງ
ເຈົ້າ, ເພາະວ່າເຈົ້າຈະເຮັດໃຫ້ຜົມເສັ້ນໜຶ່ງ
ກັບເປັນດຳ ຫລື ຂາວບໍ່ໄດ້;
37 ແຕ່ຈົ່ງໃຫ້ຖ້ອຍຄຳຂອງເຈົ້າເປັນດັ່ງນີ້,
ແມ່ນກໍໃຫ້ວ່າແມ່ນ; ບໍ່ແມ່ນກໍໃຫ້ວ່າບໍ່ແມ່ນ;
ເພາະຄຳເວົ້າເກີນນີ້ໄປມາຈາກຄວາມຊົ່ວ.
38 ແລະ ຈົ່ງເບິ່ງ, ມັນມີຂຽນໄວ້ວ່າ, [ກ]ຕາ
ຕໍ່ຕາ, ແລະ ແຂ້ວຕໍ່ແຂ້ວ;
39 ແຕ່ເຮົາກ່າວກັບເຈົ້າວ່າ ຢ່າ [ກ]ຕໍ່ສູ້ກັບ
ຄົນຊົ່ວ, ແຕ່ຖ້າຜູ້ໃດຕົບແກ້ມເບື້ອງຂວາ
ຂອງເຈົ້າ, ຈົ່ງ [ຂ]ປິ່ນແກ້ມເບື້ອງຊ້າຍໃຫ້ຜູ້
ນັ້ນນຳອີກ;
40 ແລະ ຖ້າຄົນໃດຢາກຟ້ອງສານເອົາ
ເສື້ອຊັ້ນໃນຂອງເຈົ້າ, ກໍຈົ່ງເອົາເສື້ອຊັ້ນ
ນອກຂອງເຈົ້າໃຫ້ເຂົາເໝືອນກັນ;
41 ແລະ ຖ້າຜູ້ໃດຈະບັງຄັບໃຫ້ເຈົ້າຍ່າງ
ໄປໜຶ່ງຫລັກ, ກໍໃຫ້ເຈົ້າໄປກັບເຂົາເຖິງ
ສອງຫລັກ.
42 ຈົ່ງ [ກ]ໃຫ້ແກ່ຄົນທີ່ຂໍເຈົ້າ, ແລະ ຢ່າໄດ້
ປິ່ນຫລັງໃສ່ຜູ້ຂໍຢືມເຈົ້າ.
43 ແລະ ຈົ່ງ ເບິ່ງ ມັນມີຂຽນໄວ້ອີກ, ວ່າ
ຈົ່ງຮັກເພື່ອນບ້ານຂອງເຈົ້າ ແລະ ກຽດຊັງ
ສັດຕູຂອງເຈົ້າ;
44 ແຕ່ຈົ່ງເບິ່ງ ເຮົາກ່າວກັບເຈົ້າວ່າ, ຈົ່ງ

26 *ກ* ແອວ 11:3.
27 *ກ* 2 ນຟ 9:36; ຄພ 59:6.
28 *ກ* ຄພ 42:23.
ຄມພ ກິເລດຕັນຫາ.
29 *ກ* ກຈກ 8:22.
30 *ກ* ມທ 10:38; 16:24;
ລກ 9:23.
31 *ກ* ຄມພ ຢ່າຮ້າງ.
32 *ກ* ມຣກ 10:11–12.
*ຂ* ຄມພ ການລ່ວງປະເວນີ.
*ຄ* ຄມພ ຫລິ້ນຊູ້.
33 *ກ* ຄມພ ຄຳສາບານ.
34 *ກ* ຄມພ ຄຳຫຍາບຄາຍ.
38 *ກ* ລລວ 24:20.
39 *ກ* 3 ນຟ 6:13;
4 ນຟ 1:34;
ຄພ 98:23–32.
*ຂ* ຄມພ ອົດທົນ,
ຄວາມອົດທົນ.
42 *ກ* ຢຄ 2:17–19;
ມຊຢ 4:22–26.

ຮັກ [ກ]ສັດຕູຂອງເຈົ້າ, ຈົ່ງໃຫ້ພອນແກ່ຄົນທີ່
ປ້ອຍດ່າເຈົ້າ, ຈົ່ງເຮັດດີຕໍ່ຜູ້ທີ່ກຽດຊັງເຈົ້າ,
ແລະ ຈົ່ງ [ຂ]ອະທິຖານເພື່ອຜູ້ທີ່ໃຊ້ເຈົ້າຢ່າງ
ໝິ່ນປະໝາດ ແລະ ຂົ່ມເຫັງເຈົ້າ;
45 ເພື່ອວ່າເຈົ້າຈະໄດ້ເປັນລູກຂອງພຣະ
ບິດາ ຂອງເຈົ້າ ຜູ້ປະ ທັບ ຢູ່ ໃນ ສະຫວັນ;
ເພາະພຣະອົງໄດ້ເຮັດໃຫ້ດວງຕາເວັນຂຶ້ນ
ສ່ອງແສງໃສ່ຄົນຊົ່ວ ແລະ ຄົນດີ.
46 ສະນັ້ນ ເລື່ອງເຫລົ່ານີ້ ຊຶ່ງເປັນຂອງ
ສະໄໝກ່ອນ, ຊຶ່ງມີຢູ່ໃນກົດ, ຈຶ່ງສົມບູນທັງ
ໝົດໃນເຮົາ.
47 ສິ່ງ [ກ]ເກົ່າໝົດໄປ, ແລະ ທຸກສິ່ງເປັນ
ຂອງໃໝ່.
48 ສະນັ້ນ ເຮົາຈຶ່ງຢາກໃຫ້ເຈົ້າ [ກ]ດີພ້ອມ
ຄືກັນກັບເຮົາ, ຫລື ພຣະບິດາຂອງເຈົ້າ ຜູ້
ປະທັບຢູ່ໃນສະຫວັນຊົງດີພ້ອມ.

## ບົດທີ 13

*ພຣະເຢຊູສິດສອນຄຳອະທິຖານຂອງພຣະຜູ້ເປັນເຈົ້າ ໃຫ້ແກ່ຊາວນີໄຟ—ພວກເຂົາຄວນຮີບໂຮມຊັບສົມບັດໄວ້ໃນສະຫວັນ—ສານຸສິດສິບສອງຄົນຖືກບັນຊາໃຫ້ປະຕິບັດສາດສະໜາກິດ ໂດຍບໍ່ຄິດກ່ຽວກັບສິ່ງຂອງທາງໂລກ—ປຽບທຽບກັບ ມັດທາຍ 6. ປະມານ ຄ.ສ. 34.*

1 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວວ່າ
ເຮົາຢາກໃຫ້ເຈົ້າ [ກ]ໃຫ້ທານແກ່ຄົນຍາກ
ຈົນ; ແຕ່ຈົ່ງລະວັງຢ່າໃຫ້ທານເພື່ອອວດ
ຄົນອື່ນ; ເພາະຖ້າເຮັດຢ່າງນັ້ນ ເຈົ້າຈະບໍ່
ໄດ້ຮັບລາງວັນຈາກພຣະບິດາຂອງເຈົ້າ ຜູ້
ສະຖິດຢູ່ໃນສະຫວັນ.
2 ສະນັ້ນ, ເມື່ອເຈົ້າໃຫ້ທານ ຢ່າໄດ້ເປົ່າ
ແກໄປກ່ອນໜ້າເຈົ້າ, ເໝືອນດັ່ງຄົນໜ້າ
ຊື່ໃຈຄົດເຄີຍເຮັດໃນທຳມະສາລາ ແລະ
ຕາມຖະໜົນຫົນທາງ, ເພື່ອໃຫ້ມະນຸດ
[ກ]ສັນລະເສີນ. ຕາມຈິງແລ້ວ ເຮົາກ່າວກັບ
ເຈົ້າວ່າ, ພວກເຂົາໄດ້ຮັບລາງວັນຂອງ
ພວກເຂົາແລ້ວ.
3 ແຕ່ເມື່ອເຈົ້າໃຫ້ທານ ຢ່າໃຫ້ມືຊ້າຍ
ຂອງເຈົ້າຮູ້ວ່າມືຂວາຂອງເຈົ້າເຮັດຫຍັງ;
4 ເພື່ອຂອງທານຂອງເຈົ້າຈະເປັນໄປ
ຢ່າງລັບໆ ແລະ ພຣະບິດາຂອງເຈົ້າຜູ້ເຫັນ
ໃນທີ່ລັບຈະໂຜດປະທານລາງວັນໃຫ້ແກ່
ເຈົ້າຢ່າງເປີດເຜີຍ.
5 ແລະ ເມື່ອເຈົ້າ [ກ]ອະທິຖານ ຈົ່ງຢ່າເຮັດ
ເໝືອນຄົນໜ້າຊື່ໃຈຄົດ, ເພາະພວກເຂົາ
ມັກຢືນອະທິຖານໃນທຳມະສາລາ ແລະ
ຕາມແຈຖະໜົນ, ເພື່ອຜູ້ຄົນຈະໄດ້ເຫັນ
ພວກເຂົາ. ຕາມຈິງແລ້ວ ເຮົາກ່າວກັບເຈົ້າ
ວ່າ, ພວກເຂົາໄດ້ຮັບລາງວັນຂອງພວກ
ເຂົາແລ້ວ.
6 ແຕ່ເວລາເຈົ້າອະທິຖານ, ຈົ່ງເຂົ້າໄປ
ໃນຫ້ອງ ແລະ ເມື່ອເຈົ້າປິດປະຕູແລ້ວ, ຈົ່ງ
ອະທິຖານຫາພຣະບິດາຂອງເຈົ້າຜູ້ສະຖິດ
ຢູ່ໃນທີ່ລັບ; ແລະ ພຣະບິດາຂອງເຈົ້າຜູ້
ເຫັນໃນທີ່ລັບຈະໂຜດປະທານລາງວັນໃຫ້
ແກ່ເຈົ້າຢ່າງເປີດເຜີຍ.
7 ແຕ່ເມື່ອເຈົ້າອະທິຖານຢູ່, ຢ່າເວົ້າຊ້ຳ
ຄຳເກົ່າ, ເໝືອນດັ່ງຄົນນອກສາດສະໜາ,
ເພາະວ່າພວກເຂົາຄິດວ່າ ຖ້າພວກເຂົາ
ເວົ້າຫລາຍໆເທື່ອ ພຣະອົງຈະໂຜດຮັບ
ຟັງ.
8 ສະນັ້ນ ຢ່າເຮັດຄືພວກເຂົາ, ເພາະວ່າ

44 *ກ* ສພສ 24:17; ແອວ 48:23.
*ຂ* ກຈກ 7:59–60.
47 *ກ* 3 ນຟ 15:2, 7; ຄພ 22:1.
48 *ກ* ມທ 5:48; 3 ນຟ 27:27. ຄມພ ດີພ້ອມທຸກຢ່າງ.
**13** 1 *ກ* ຄມພ ໃຫ້ທານ, ການໃຫ້ທານ.
2 *ກ* ຄພ 121:34–35.
5 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

ພຣະບິດາຂອງເຈົ້າ [ກ]ຮູ້ໃນສິ່ງທີ່ເຈົ້າຕ້ອງການກ່ອນທີ່ເຈົ້າຈະຂໍຈາກພຣະອົງ.

9 ສະນັ້ນ [ກ]ຕາມວິທີນີ້ ເຈົ້າຈົ່ງ [ຂ]ອະທິຖານ: ໂອ້ [ຄ]ພຣະບິດາຂອງຂ້າພຣະອົງຜູ້ສະຖິດຢູ່ໃນສະຫວັນ, ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາລົບບູຊາ.

10 ຂໍໃຫ້ພຣະປະສົງຂອງພຣະອົງເປັນໄປໃນແຜ່ນດິນໂລກເໝືອນດັ່ງທີ່ເປັນໄປໃນສະຫວັນ.

11 ແລະ ຂໍຈົ່ງໂຜດຍົກໂທດໃຫ້ຂ້າພຣະອົງເໝືອນດັ່ງທີ່ຂ້າພຣະອົງໄດ້ຍົກໂທດໃຫ້ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງ.

12 ແລະ ຂໍຢ່າ [ກ]ພາຂ້າພຣະອົງເຂົ້າໄປໃນການທົດລອງ, ແຕ່ຂໍຈົ່ງໃຫ້ຂ້າພຣະອົງພົ້ນຈາກຄວາມຊົ່ວ.

13 ເພາະ ອາ ນາ ຈັກ, ແລະ ອຳນາດ, ແລະ ລັດສະໝີພາບ, ກໍເປັນຂອງພຣະອົງຕະຫລອດໄປ. ອາແມນ.

14 ເພາະວ່າ, ຖ້າຫາກເຈົ້າໃຫ້ [ກ]ອະໄພແກ່ເພື່ອນມະນຸດດ້ວຍກັນ ພຣະບິດາເທິງສະຫວັນຂອງເຈົ້າກໍຈະໃຫ້ອະໄພແກ່ເຈົ້າຄືກັນ;

15 ແຕ່ ຖ້າ ຫາກ ເຈົ້າ ບໍ່ ໃຫ້ ອະ ໄພ ແກ່ເພື່ອນມະນຸດດ້ວຍກັນ ພຣະບິດາຂອງເຈົ້າກໍຈະບໍ່ໃຫ້ອະໄພແກ່ເຈົ້າຄືກັນ.

16 ຍິ່ງໄປກວ່ານັ້ນ, ເມື່ອເຈົ້າ [ກ]ຖືສິນອົດເຂົ້າ ຢ່າເຮັດໜ້າເສົ້າໝອງເໝືອນດັ່ງຄົນໜ້າຊື່ໃຈຄົດ, ເພາະພວກເຂົາເຮັດໜ້າເສົ້າໝອງເພື່ອຢາກໃຫ້ຄົນອື່ນເຫັນວ່າ ພວກເຂົາຖືສິນອົດເຂົ້າ. ຕາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ພວກເຂົາໄດ້ຮັບລາງວັນຂອງພວກເຂົາແລ້ວ.

17 ແຕ່ເວລາເຈົ້າຖືສິນອົດເຂົ້າ, ຈົ່ງລ້າງໜ້າ, ແລະ ເອົານ້ຳມັນທາຫົວຂອງເຈົ້າ;

18 ເພື່ອບໍ່ໃຫ້ຄົນເຫັນວ່າເຈົ້າຖືສິນອົດເຂົ້າ, ແຕ່ໃຫ້ພຣະບິດາຂອງເຈົ້າຜູ້ສະຖິດຢູ່ໃນ [ກ]ທີ່ລັບເຫັນ, ແລະ ພຣະບິດາຂອງເຈົ້າຜູ້ເຫັນຢູ່ໃນທີ່ລັບຈະໂຜດປະທານລາງວັນໃຫ້ແກ່ເຈົ້າຢ່າງເປີດເຜີຍ.

19 ຢ່າຮິບໂຮມຊັບສົມບັດສຳລັບຕົນໄວ້ໃນໂລກ, ຊຶ່ງເປັນບ່ອນມອດ ແລະ ຂີ້ໝ້ຽງກັດກິນໄດ້, ແລະ ເປັນບ່ອນທີ່ໂຈນເຈາະເຂົ້າລັກເອົາໄດ້;

20 ແຕ່ຈົ່ງຮິບໂຮມ [ກ]ຊັບສົມບັດສຳລັບຕົນໄວ້ໃນສະຫວັນ, ຊຶ່ງເປັນບ່ອນມອດ ແລະ ຂີ້ໝ້ຽງກັດກິນບໍ່ໄດ້, ແລະ ທັງໂຈນຈະເຈາະ ແລະ ລັກເອົາໄປບໍ່ໄດ້.

21 ເພາະວ່າຊັບສົມບັດຂອງເຈົ້າຢູ່ບ່ອນໃດ, ໃຈຂອງເຈົ້າກໍຢູ່ບ່ອນນັ້ນຄືກັນ.

22 [ກ]ດວງສະຫວ່າງຂອງຮ່າງກາຍຄືຕາ; ສະນັ້ນ, ຖ້າຫາກຕາຂອງເຈົ້າເປັນໜຶ່ງ, ໝົດທັງຮ່າງຂອງເຈົ້າກໍຈະເຕັມໄປດ້ວຍແສງສະຫວ່າງ.

23 ແຕ່ຖ້າຫາກຕາຂອງເຈົ້າຊົ່ວ, ໝົດທັງຮ່າງກາຍຂອງເຈົ້າຈະເຕັມໄປດ້ວຍຄວາມມືດ. ສະນັ້ນ, ຖ້າຫາກແສງສະຫວ່າງທີ່ຢູ່ໃນຕົວຂອງເຈົ້າມືດໄປ, ຄວາມມືດນັ້ນຈະໃຫຍ່ຫລວງພຽງໃດນໍ!

24 ບໍ່ມີຜູ້ໃດສາມາດເປັນ [ກ]ຂ້າໃຊ້ຂອງສອງເຈົ້າ ບ່າວສອງນາຍໄດ້; ເພາະລາວຈະ

8 *ກ* ຄພ 84:83.
9 *ກ* ມທ 6:9–13.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຄ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
12 *ກ* ປຈສ ມທ 6:14 (ພາກທ້ອຍທ້າຍ).
14 *ກ* ມຊຢ 26:30–31; ຄພ 64:9. ຄມພ ອະໄພ, ໃຫ້ອະໄພ.
16 *ກ* ອຊຢ 58:5–7. ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
18 *ກ* ຄພ 38:7.
20 *ກ* ຣລມ 5:8; 8:25.
22 *ກ* ຄພ 88:67.
24 *ກ* 1 ຊມອ 7:3.

ຊັງນາຍຜູ້ນີ້ ແລະ ໄປຮັກນາຍຜູ້ນັ້ນ, ຫລື ຈະ
ນັບຖືນາຍຜູ້ນີ້ ແລະ ໝິ່ນປະໝາດນາຍຜູ້
ນັ້ນ. ເຈົ້າຈະເປັນຂ້າໃຊ້ຂອງພຣະເຈົ້າ ແລະ
ເປັນຂ້າໃຊ້ຂອງເງິນຄຳພ້ອມກັນບໍ່ໄດ້.
25 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອພຣະເຢຊູກ່າວຂໍ້ຄວາມເຫລົ່ານີ້ແລ້ວ,
ພຣະອົງກໍໄດ້ຫລຽວເບິ່ງຄົນສິບສອງຄົນ
ຜູ້ທີ່ພຣະອົງໄດ້ເລືອກໄວ້ ແລະ ກ່າວກັບ
ພວກເພິ່ນວ່າ: ຈົ່ງຈື່ຈຳຄຳເວົ້າ ຊຶ່ງເຮົາໄດ້
ເວົ້າມານັ້ນ. ເພາະຈົ່ງເບິ່ງ, ພວກເຈົ້າຄືຜູ້
ທີ່ເຮົາໄດ້ເລືອກໄວ້ ເພື່ອຈະໄດ້ [ກ]ປະຕິບັດ
ສາດສະໜາກິດແກ່ຜູ້ຄົນພວກນີ້. ສະນັ້ນ
ເຮົາກ່າວກັບເຈົ້າວ່າ ຢ່າ [ຂ]ຄິດເຖິງຊີວິດ
ຂອງເຈົ້າ, ວ່າເຈົ້າຈະກິນຫຍັງ, ຫລື ເຈົ້າຈະ
ດື່ມຫຍັງ; ແລະ ຢ່າຄິດເຖິງຮ່າງກາຍຂອງ
ເຈົ້າ, ວ່າເຈົ້າຈະນຸ່ງຫຍັງ. ຊີວິດກໍຍິ່ງໃຫຍ່
ກວ່າອາຫານບໍ່ແມ່ນບໍ, ແລະ ຮ່າງກາຍກໍ
ຍິ່ງໃຫຍ່ກວ່າເຄື່ອງນຸ່ງຫົ່ມບໍ່ແມ່ນບໍ?
26 ຈົ່ງ ເບິ່ງ ນົກ ໃນ ອາ ກາດ, ມັນ ບໍ່
ໄດ້ຫວ່ານ, ທັງມັນບໍ່ໄດ້ກ່ຽວ ຫລື ບໍ່ໄດ້
ເຕົ້າໂຮມໃສ່ເລົ້າໄວ້; ແຕ່ພຣະບິດາເທິງ
ສະຫວັນຂອງເຈົ້າຍັງລ້ຽງດູມັນ. ເຈົ້າປະ
ເສີດຫລາຍກວ່ານົກບໍ່ແມ່ນບໍ?
27 ໃຜໃນເຈົ້າເມື່ອຄິດເອົາ ຈະສາມາດ
ເພີ່ມຄວາມສູງຈັກສອກໜຶ່ງໃຫ້ຕົນເອງໄດ້
ບໍ?
28 ແລະ ເຫດໃດເຈົ້າຈຶ່ງຄິດເຖິງເຄື່ອງ
ນຸ່ງຫົ່ມ? ຈົ່ງສັງເກດເບິ່ງດອກໄມ້ໃນທົ່ງ ວ່າ
ມັນເຕີບໂຕຂຶ້ນໄດ້ແນວໃດ? ມັນບໍ່ໄດ້ທຳ
ງານ, ທັງບໍ່ໄດ້ເຂັນຝ້າຍ;
29 ແລະ ເຮົາກ່າວກັບເຈົ້າວ່າ ເຖິງແມ່ນ
ໂຊໂລໂມນໃນຄວາມສະຫງ່າລາສີທັງໝົດ
ຂອງລາວ ກໍຍັງບໍ່ໄດ້ທົງເຄື່ອງງາມເທົ່າກັບ
ດອກໄມ້ເຫລົ່ານີ້ດອກໜຶ່ງ.
30 ດັ່ງ ນັ້ນ, ຖ້າຫາກພຣະເຈົ້າໄດ້ແຕ່ງ
ຫຍ້າໃນທົ່ງຢ່າງນັ້ນ, ຊຶ່ງເປັນຢູ່ມື້ນີ້ ແລະ ມື້
ໜ້າຕ້ອງຖືກໂຍນຖິ້ມໃສ່ເຕົາໄຟ, ພຣະອົງ
ກໍຈະແຕ່ງເຈົ້າເຊັ່ນນັ້ນ ຖ້າຫາກເຈົ້າບໍ່ນ້ອຍ
ໜ້າໃນສັດທາ.
31 ສະນັ້ນ ຢ່າຄິດ ໂດຍກ່າວວ່າ ຈະກິນ
ຫຍັງ? ຫລື ດື່ມຫຍັງ? ຫລື ນຸ່ງຫົ່ມຫຍັງ?
32 ເພາະພຣະບິດາ ເທິງສະຫວັນຂອງ
ເຈົ້າຮູ້ວ່າ ເຈົ້າຕ້ອງການສິ່ງທັງໝົດນີ້.
33 ແຕ່ເຈົ້າຈົ່ງສະແຫວງຫາ [ກ]ອານາຈັກ
ຂອງພຣະເຈົ້າ ແລະ ຄວາມຊອບທຳຂອງ
ພຣະອົງເສຍກ່ອນ, ແລ້ວພຣະອົງຈະເພີ່ມ
ສິ່ງເຫລົ່ານີ້ໃຫ້ແກ່ເຈົ້າ.
34 ສະນັ້ນຢ່າຄິດເຖິງມື້ອື່ນ, ເພາະມື້ອື່ນ
ຈະຄິດເຖິງເລື່ອງຂອງມັນເອງ. ມື້ໜຶ່ງກໍພຽງ
ພໍແລ້ວກັບຄວາມຊົ່ວຂອງມື້ນັ້ນ.

## ບົດທີ 14

*ພຣະເຢຊູບັນຊາວ່າ: ຢ່າກ່າວໂທດຜູ້ອື່ນ; ໃຫ້ທູນຂໍຈາກພຣະເຈົ້າ; ລະວັງສາດສະດາປອມ—ພຣະອົງສັນຍາວ່າ ຜູ້ທີ່ເຮັດຕາມພຣະປະສົງຂອງພຣະບິດາຈະໄດ້ຮັບຄວາມລອດ—ປຽບທຽບກັບ ມັດທາຍ 7. ປະມານ ຄ.ສ. 34.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອພຣະເຢຊູຮັບສັ່ງຂໍ້ຄວາມເຫລົ່ານີ້
ແລ້ວ ພຣະອົງໄດ້ຫັນໄປທາງຝູງຊົນອີກ,
ແລະ ໄດ້ເປີດປາກກ່າວກັບພວກເຂົາອີກ,
ມີຄວາມວ່າ: ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, [ກ]ຢ່າກ່າວໂທດຜູ້ອື່ນ, ເພື່ອ
ເຈົ້າຈະບໍ່ຖືກກ່າວໂທດຄືນ.

25 *ກ* ຄມພ ປະຕິບັດ.
*ຂ* ແອວ 31:37–38; ຄພ 84:79–85.
33 *ກ* ລກ 12:31.
**14** 1 *ກ* ປຈສ ມທ 7:1–2 (ພາກທ້ອຍທ້າຍ); ຢຣ 7:24.

2 [ກ]ເພາະສິ່ງໃດທີ່ເຈົ້າເອົາມາກ່າວໂທດຜູ້ອື່ນ, ເຈົ້າກໍຈະຖືກກ່າວໂທດໃນສິ່ງນັ້ນ; ແລະ ເຈົ້າຕວງຜູ້ອື່ນດ້ວຍເຄື່ອງຜອງອັນໃດ, ເຈົ້າກໍຈະຖືກຕວງດ້ວຍເຄື່ອງຜອງອັນນັ້ນຄືກັນ.

3 ແລະ ເປັນຫຍັງເຈົ້າຈຶ່ງຫລຽວເຫັນຂີ້ເຫຍື້ອທີ່ຢູ່ໃນຕາຂອງພີ່ນ້ອງຂອງເຈົ້າ, ແຕ່ໄມ້ທັງທ່ອນທີ່ຢູ່ໃນຕາຂອງເຈົ້າ, ເຈົ້າບໍ່ຮູ້ສຶກ?

4 ຫລື ເຈົ້າຈະເວົ້າກັບພີ່ນ້ອງຂອງເຈົ້າໄດ້ແນວໃດວ່າ: ໃຫ້ຂ້ອຍເຂ່ຍຂີ້ເຫຍື້ອອອກຈາກຕາເຈົ້າເທາະ—ແລະ ຈົ່ງເບິ່ງ, ໄມ້ທັງທ່ອນຢູ່ໃນຕາຂອງເຈົ້າ?

5 ເຈົ້າຄົນໜ້າຊື່ໃຈຄົດ, ຈົ່ງເອົາໄມ້ທັງ [ກ]ທ່ອນອອກຈາກຕາຂອງເຈົ້າເສຍກ່ອນ; ແລ້ວເຈົ້າຈຶ່ງຈະເຫັນໄດ້ຄັກ ເພື່ອຈະໄດ້ເຂ່ຍຂີ້ເຫຍື້ອອອກຈາກຕາຂອງພີ່ນ້ອງຂອງເຈົ້າ.

6 ຢ່າເອົາຂອງທີ່ [ກ]ປະເສີດໃຫ້ໝາ, ຢ່າໂຍນໄຂ່ມຸກໃສ່ຕໍ່ໜ້າໝູ, ຢ້ານວ່າມັນຈະຢຽບຢ່ຳເສຍ ແລະ ຈະຕ່າວຄືນມາຂົບເຈົ້ານຳອີກ.

7 ຈົ່ງ [ກ]ໝັ່ນຂໍ, ແລ້ວເຈົ້າຈະໄດ້ຮັບ; ຈົ່ງໝັ່ນຊອກ, ແລ້ວເຈົ້າຈະພົບ; ຈົ່ງໝັ່ນເຄາະ, ແລ້ວຈະມີຜູ້ໄຂປະຕູໃຫ້.

8 ເພາະວ່າທຸກຄົນທີ່ໝັ່ນຂໍ, ຈະໄດ້ຮັບ; ແລະ ທຸກຄົນທີ່ໝັ່ນຊອກ, ຈະພົບ; ແລະ ທຸກຄົນທີ່ໝັ່ນເຄາະ, ຈະມີຜູ້ໄຂປະຕູໃຫ້.

9 ຫລື ມີຜູ້ໃດແດ່ໃນພວກເຈົ້າທີ່ ຖ້າຫາກລູກຂອງຕົນຂໍເຂົ້າປັ້ນໜຶ່ງ, ພໍ່ຈະເອົາກ້ອນຫີນໃຫ້ບໍ?

10 ຫລື ຖ້າຫາກລູກຂອງຕົນຂໍປາ, ພໍ່ຈະເອົາງູໃຫ້ບໍ?

11 ເຫດສະນັ້ນ, ເຈົ້າຜູ້ເປັນຄົນຊົ່ວກໍຍັງຮູ້ຈັກເອົາຂອງດີໃຫ້ລູກຂອງຕົນ, ແລ້ວພຣະບິດາຂອງເຈົ້າຜູ້ສະຖິດຢູ່ໃນສະຫວັນຈະປະທານຂອງດີໃຫ້ແກ່ຄົນທີ່ທູນຂໍຈາກພຣະອົງຫລາຍກວ່ານັ້ນອີກຈັກເທົ່າ?

12 ສະນັ້ນ, ທຸກສິ່ງທຸກຢ່າງບໍ່ວ່າອັນໃດກໍຕາມທີ່ເຈົ້າຢາກໃຫ້ມະນຸດເຮັດກັບເຈົ້າ, ເຈົ້າຈົ່ງ [ກ]ເຮັດເຊັ່ນນັ້ນກັບພວກເຂົາ, ເພາະນີ້ຄືກົດ ແລະ ສາດສະດາ.

13 ຈົ່ງເຂົ້າໄປທາງ [ກ]ປະຕູຄັບ; ເພາະວ່າປະຕູກວ້າງຂວາງ ແລະ ທາງກໍ [ຂ]ກວ້າງຂວາງຈະນຳໄປຫາຄວາມພິນາດ, ແລະ ມີຫລາຍຄົນເຂົ້າໄປໃນທາງນັ້ນ.

14 ເພາະວ່າ [ກ]ປະຕູທີ່ນຳໄປສູ່ຊີວິດກໍຄັບ, ແລະ ທາງກໍ [ຂ]ແຄບ, ແລະ [ຄ]ມີໜ້ອຍຄົນທີ່ພົບທາງນີ້.

15 ຈົ່ງລະວັງ [ກ]ສາດສະດາປອມ, ຜູ້ທີ່ປອມຕົວຄືແກະມາຫາເຈົ້າ, ແຕ່ພາຍໃນເຂົາເປັນໝາໄນຕົວຮ້າຍ.

16 ເຈົ້າຈະຮູ້ຈັກເຂົາໂດຍໝາກຜົນຂອງເຂົາ. ຜູ້ຄົນຈະເກັບໝາກອະງຸ່ນຈາກເຄືອໜາມບໍ, ຫລື ເກັບໝາກເດື່ອຈາກຕົ້ນໜາມບໍ?

17 ດັ່ງນັ້ນ ຕົ້ນໄມ້ດີທຸກຕົ້ນຍ່ອມເກີດໝາກຜົນດີ; ແຕ່ຕົ້ນໄມ້ບໍ່ດີຍ່ອມເກີດໝາກຜົນບໍ່ດີ.

18 ຕົ້ນດີຈະເກີດໝາກຜົນບໍ່ດີບໍ່ໄດ້, ຫລື ຕົ້ນໄມ້ບໍ່ດີຈະເກີດໝາກຜົນດີບໍ່ໄດ້.

2 *ກ* ມມ 8:19.
5 *ກ* ຢຮ 8:3–11.
6 *ກ* ຄມພ ສັກສິດ, ຄວາມສັກສິດ.
7 *ກ* 3 ນຟ 27:29. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
12 *ກ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.
13 *ກ* ລກ 13:24; 3 ນຟ 27:33.
*ຂ* ຄພ 132:25.
14 *ກ* 2 ນຟ 9:41; 31:9, 17–18; ຄພ 22.
*ຂ* 1 ນຟ 8:20.
*ຄ* 1 ນຟ 14:12.
15 *ກ* ຢມຢ 23:21–32; 2 ນຟ 28:9, 12, 15.

19 ຕົ້ນໄມ້ທຸກຕົ້ນທີ່ [ກ]ບໍ່ເກີດໝາກຜົນດີ
ຕ້ອງຖືກໂຄ່ນລົງ, ແລະ ຖືກໂຍນເຂົ້າໃນ
ກອງໄຟເສຍ.
20 ດັ່ງນັ້ນ ເຈົ້າຈະຮູ້ຈັກເຂົາໂດຍ [ກ]ໝາກ
ຜົນຂອງເຂົາ.
21 ບໍ່ແມ່ນໝົດທຸກຄົນທີ່ກ່າວກັບເຮົາວ່າ,
ພຣະອົງເຈົ້າເອີຍ, ພຣະອົງເຈົ້າເອີຍ, ແລ້ວ
ຈະໄດ້ເຂົ້າໄປໃນອານາຈັກສະຫວັນໄດ້; ມີ
ແຕ່ຜູ້ທີ່ກະທຳຕາມນ້ຳພຣະໄທຂອງພຣະ
ບິດາຂອງເຮົາຜູ້ສະຖິດຢູ່ໃນສະຫວັນເທົ່າ
ນັ້ນ ທີ່ຈະເຂົ້າໄປໄດ້.
22 ຫລາຍຄົນຈະ [ກ]ກ່າວກັບເຮົາໃນມື້
ນັ້ນວ່າ: ພຣະອົງເຈົ້າເອີຍ, ພຣະອົງເຈົ້າ
ເອີຍ, ພວກຂ້ານ້ອຍບໍ່ໄດ້ທຳນາຍໃນພຣະ
ນາມຂອງພຣະອົງບໍ, ແລະ ໃນພຣະນາມ
ຂອງພຣະອົງ ພວກຂ້ານ້ອຍຈຶ່ງໄດ້ຂັບໄລ່
ຜີອອກໄປ, ແລະ ໃນພຣະນາມຂອງພຣະ
ອົງພວກຂ້ານ້ອຍຈຶ່ງໄດ້ກະທຳສິ່ງແປກປະ
ຫລາດຫລາຍຢ່າງບໍ່ແມ່ນບໍ?
23 ແລະ ເມື່ອນັ້ນເຮົາຈະບອກກັບພວກ
ເຂົາວ່າ: ເຮົາບໍ່ເຄີຍ [ກ]ຮູ້ຈັກພວກເຈົ້າ;
ພວກເຈົ້າຜູ້ທີ່ເຮັດຄວາມຊົ່ວຮ້າຍເອີຍ, ຈົ່ງ
[ຂ]ຜ່າຍໜີໄປໃຫ້ພົ້ນຈາກເຮົາເສຍ.
24 ສະນັ້ນ, ຜູ້ໃດກໍຕາມທີ່ໄດ້ຍິນຄຳ
ເຫລົ່ານີ້ຂອງເຮົາ ແລະ ປະຕິບັດຕາມ, ຜູ້
ນັ້ນກໍປຽບເໝືອນຄົນສະຫລາດຜູ້ປຸກເຮືອນ
ຂອງຕົນໃສ່ເທິງດານ [ກ]ຫີນ—
25 ແລະ [ກ]ຝົນຖັ່ງເທລົງມາ, ແລະ ນ້ຳກໍ
ນອງ, ແລະ ລົມກໍພັດ, ແລະ ປະທະເຮືອນ
ນັ້ນ; ແລະ ມັນບໍ່ [ຂ]ພັງ, ເພາະວ່າມັນຖືກສ້າງ
ໃສ່ເທິງດານຫີນ.
26 ແຕ່ທຸກຄົນທີ່ໄດ້ຍິນຄຳເຫລົ່ານີ້ຂອງ
ເຮົາ ແລ້ວບໍ່ປະຕິບັດຕາມກໍປຽບເໝືອນ
ຄົນໂງ່, ຜູ້ປຸກເຮືອນຂອງຕົນໃສ່ເທິງ [ກ]ດິນ
ຊາຍ—
27 ແລະ ຝົນຖັ່ງເທລົງມາ, ແລະ ນ້ຳກໍ
ນອງ, ແລະ ລົມກໍພັດ, ແລະ ປະທະເຮືອນ
ນັ້ນ; ແລະ ມັນພັງ, ແລະ ການພັງນັ້ນໃຫຍ່
ຫລວງ.

## ບົດທີ 15

*ພຣະເຢຊູປະກາດວ່າກົດຂອງໂມເຊສົມບູນໃນພຣະອົງ—ຊາວນີໄຟແມ່ນແກະອີກຝູງໜຶ່ງ ຊຶ່ງພຣະອົງໄດ້ກ່າວເຖິງໃນເຢຣູຊາເລັມ—ເພາະຄວາມຊົ່ວຮ້າຍ, ຜູ້ຄົນຂອງພຣະຜູ້ເປັນເຈົ້າໃນເຢຣູຊາເລັມຈຶ່ງບໍ່ຮູ້ຈັກກ່ຽວກັບແກະຂອງອິດສະຣາເອນທີ່ແຕກກະຈັດກະຈາຍໄປ. ປະມານ ຄ.ສ. 34.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້
ແລ້ວ, ພຣະອົງໄດ້ທອດພຣະເນດເບິ່ງຝູງ
ຊົນໂດຍຮອບ, ແລະ ໄດ້ກ່າວກັບພວກເຂົາ
ວ່າ: ຈົ່ງເບິ່ງ, ເຈົ້າໄດ້ຍິນເລື່ອງທີ່ເຮົາສິດ
ສອນກ່ອນທີ່ເຮົາໄດ້ຂຶ້ນໄປເຝົ້າພຣະບິດາ
ຂອງເຮົາແລ້ວ; ສະນັ້ນ, ຜູ້ໃດທີ່ຈົດຈຳຄຳ
ເວົ້າເຫລົ່ານີ້ຂອງເຮົາ ແລະ [ກ]ປະຕິບັດຕາມ,
ເຮົາຈະ [ຂ]ຍົກຜູ້ນັ້ນຂຶ້ນໃນວັນສຸດທ້າຍ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ແລ້ວ
ພຣະອົງເຫັນວ່າມີບາງຄົນໃນບັນດາພວກ
ເຂົາທີ່ແປກໃຈ ແລະ ສົງໄສວ່າພຣະອົງ

19 *ກ* ມທ 3:10; ແອວ 5:36–41; ຄພ 97:7.
20 *ກ* ລກ 6:43–45; ມຣນ 7:5.
22 *ກ* ແອວ 5:17.
23 *ກ* ມຊຢ 5:13; 26:24–27. *ຂ* ລກ 13:27.
24 *ກ* ຄນພ ຫີນ.
25 *ກ* ແອວ 26:6; ຮລມ 5:12. *ຂ* ສພສ 12:7.
26 *ກ* 3 ນຟ 11:40.
**15** 1 *ກ* ຢກບ 1:22. *ຂ* 1 ນຟ 13:37; ຄພ 5:35.

ມີຄວາມປະສົງອັນໃດກ່ຽວກັບ [a]ກົດຂອງ
ໂມເຊ; ເພາະພວກເຂົາບໍ່ເຂົ້າໃຈຄຳເວົ້າທີ່
ວ່າ ສິ່ງເກົ່າໄດ້ຜ່ານໄປ, ແລະ ວ່າທຸກສິ່ງ
ເປັນຂອງໃໝ່.
3 ແລະ ພຣະອົງໄດ້ກ່າວກັບພວກເຂົາ
ວ່າ: ຢ່າໄດ້ແປກໃຈເລີຍທີ່ເຮົາໄດ້ກ່າວກັບ
ເຈົ້າວ່າ ສິ່ງເກົ່າໄດ້ຜ່ານໄປ, ແລະ ທຸກສິ່ງ
ເປັນຂອງໃໝ່.
4 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ [a]ກົດທີ່
ມອບໃຫ້ແກ່ໂມເຊນັ້ນສົມບູນແລ້ວ.
5 ຈົ່ງເບິ່ງ, [a]ເຮົາຄືຜູ້ທີ່ມອບກົດໃຫ້, ແລະ
ເຮົາຄືຜູ້ທີ່ໃຫ້ພັນທະສັນຍາກັບອິດສະ
ຣາເອນຜູ້ຄົນຂອງເຮົາ; ສະນັ້ນ, ໃນເຮົາກົດ
ສົມບູນແລ້ວ, ເພາະວ່າເຮົາໄດ້ມາເພື່ອໃຫ້
ກົດນັ້ນ [b]ສົມບູນ; ສະນັ້ນ ມັນຈຶ່ງມີທີ່ສຸດ.
6 ຈົ່ງເບິ່ງ, ເຮົາ [a]ບໍ່ໄດ້ທຳລາຍສາດສະ
ດາ, ເພາະວ່າມີຫລາຍຕໍ່ຫລາຍອັນທີ່ຍັງບໍ່
ທັນສົມບູນໃນເຮົາເທື່ອ, ຕາມຈິງແລ້ວເຮົາ
ກ່າວກັບເຈົ້າວ່າ ມັນຈະສົມບູນທັງໝົດ.
7 ແລະ ເພາະວ່າເຮົາໄດ້ກ່າວກັບເຈົ້າວ່າ
ສິ່ງເກົ່າໄດ້ຜ່ານໄປ, ແຕ່ເຮົາບໍ່ໄດ້ທຳລາຍຂໍ້
ຄວາມທີ່ເວົ້າໄວ້ກ່ຽວກັບສິ່ງທີ່ຈະມາເຖິງ.
8 ເພາະຈົ່ງເບິ່ງ, [a]ພັນທະສັນຍາທີ່ເຮົາ
ໄດ້ເຮັດໄວ້ກັບຜູ້ຄົນຂອງເຮົາຍັງບໍ່ສຳເລັດ
ທັງໝົດເທື່ອ; ແຕ່ກົດທີ່ມອບໃຫ້ແກ່ໂມເຊ
ນັ້ນມີທີ່ສຸດໃນເຮົາ.
9 ຈົ່ງເບິ່ງ, ເຮົາຄື [a]ກົດ, ແລະ [b]ຄວາມສະ
ຫວ່າງ. ຈົ່ງເບິ່ງທີ່ເຮົາ ແລະ ອົດທົນຈົນເຖິງ
ທີ່ສຸດ, ແລະ ເຈົ້າຈະ [c]ມີຊີວິດ; ຍ້ອນເຮົາຈະ
ໃຫ້ຊີວິດນິລັນດອນແກ່ຄົນທີ່ [d]ອົດທົນຈົນ
ເຖິງທີ່ສຸດ.
10 ຈົ່ງເບິ່ງ, ເຮົາໄດ້ມອບ [a]ບັນຍັດໃຫ້ແກ່
ເຈົ້າ; ສະນັ້ນ ຈົ່ງຮັກສາບັນຍັດຂອງເຮົາ.
ແລະ ນີ້ຄືກົດ ແລະ ສາດສະດາ, ເພາະກົດ
ແລະ ພວກເພິ່ນໄດ້ [b]ເປັນພະຍານເຖິງເຮົາ
ໂດຍແທ້.
11 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອພຣະເຢຊູກ່າວຂໍ້ຄວາມເຫລົ່ານີ້ແລ້ວ,
ພຣະອົງໄດ້ກ່າວກັບສິບສອງຄົນ ຜູ້ຊຶ່ງພຣະ
ອົງໄດ້ເລືອກໄວ້ວ່າ:
12 ເຈົ້າ ເປັນສານຸສິດຂອງເຮົາ; ແລະ
ເຈົ້າເປັນຄວາມສະຫວ່າງຂອງຜູ້ຄົນພວກ
ນີ້, ຜູ້ເປັນສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອ
ສາຍຂອງ [a]ໂຢເຊັບ.
13 ແລະ ຈົ່ງເບິ່ງ, ນີ້ຄື [a]ແຜ່ນດິນຊຶ່ງເປັນ
ມູນມໍລະດົກຂອງເຈົ້າ; ແລະ ພຣະບິດາໄດ້
ປະທານມັນໃຫ້ແກ່ເຈົ້າ.
14 ແລະ ບໍ່ເຄີຍມີຈັກເທື່ອທີ່ພຣະບິດາ
ໄດ້ໃຫ້ພຣະບັນຍັດແກ່ເຮົາ [a]ບອກເລື່ອງນີ້
ກັບພີ່ນ້ອງຂອງເຈົ້າທີ່ເຢຣູຊາເລັມ.
15 ທັງບໍ່ເຄີຍມີຈັກເທື່ອທີ່ພຣະບິດາໄດ້
ໃຫ້ພຣະບັນຍັດແກ່ເຮົາບອກພວກເຂົາ
ກ່ຽວກັບ [a]ເຜົ່າອື່ນໆຂອງເຊື້ອສາຍອິດສະ
ຣາເອນ, ຜູ້ທີ່ພຣະບິດາໄດ້ນຳພາອອກໄປ
ຈາກແຜ່ນດິນ.
16 ພຣະບິດາໄດ້ບັນຊາໃຫ້ເຮົາບອກ
ພວກເຂົາພຽງເທົ່ານີ້:
17 ວ່າ ເຮົາມີແກະອື່ນອີກ ຊຶ່ງບໍ່ເປັນ

2 *ກ* ຄມພ ກົດຂອງໂມເຊ.
4 *ກ* ມຊຍ 13:27–31; 3 ນຟ 9:17–20.
5 *ກ* 1 ກຣທ 10:1–4; 3 ນຟ 11:14. ຄມພ ເຢໂຮວາ.
*ຂ* ແອວ 34:13.
6 *ກ* 3 ນຟ 23:1–5.
8 *ກ* 3 ນຟ 5:24–26.
9 *ກ* 2 ນຟ 26:1.
*ຂ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຄ* ຢຮ 11:25; ຄພ 84:44.
*ງ* ຄມພ ອົດທົນ, ຄວາມອົດທົນ.
10 *ກ* 3 ນຟ 12:20.
*ຂ* ມຊຍ 13:33.
12 *ກ* ຄມພ ໂຢເຊັບ, ລູກຊາຍຂອງຢາໂຄບ.
13 *ກ* 1 ນຟ 18:22–23.
14 *ກ* 3 ນຟ 5:20.
15 *ກ* 3 ນຟ 16:1–4. ຄມພ ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.

ຂອງຝູງນີ້; ແກະເຫລົ່ານັ້ນເຮົາຕ້ອງພາມາ
ເໝືອນກັນ, ແລ້ວພວກເຂົາຈະຟັງສຽງຂອງ
ເຮົາ; ແລ້ວຈະຮ່ວມເປັນຝູງດຽວກັນ ແລະ ມີ
[ກ]ຜູ້ລ້ຽງແຕ່ພຽງຜູ້ດຽວ.
18 ແລະ ບັດນີ້, ເພາະຄວາມແຂງຄໍ ແລະ
ຄວາມບໍ່ເຊື່ອຖື ພວກເຂົາຈຶ່ງບໍ່ [ກ]ເຂົ້າໃຈຄຳ
ເວົ້າຂອງເຮົາ; ສະນັ້ນ ເຮົາຈຶ່ງໄດ້ຮັບບັນຊາ
ຈາກພຣະບິດາວ່າ ບໍ່ໃຫ້ບອກພວກເຂົາອີກ
ກ່ຽວກັບເລື່ອງນີ້.
19 ແຕ່ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ
ພຣະບິດາໄດ້ບັນຊາເຮົາ ແລະ ເຮົາກໍໄດ້
ບອກເລື່ອງນີ້ກັບເຈົ້າ, ວ່າເຈົ້າໄດ້ຖືກແຍກ
ຈາກບັນດາພວກເຂົາເພາະຄວາມຊົ່ວຮ້າຍ
ຂອງພວກເຂົາ; ສະນັ້ນ ເພາະຄວາມຊົ່ວ
ຮ້າຍຂອງພວກເຂົາ, ພວກເຂົາຈຶ່ງບໍ່ຮູ້ຈັກ
ຫຍັງເລີຍກ່ຽວກັບເຈົ້າ.
20 ແລະ ຕາມຈິງແລ້ວເຮົາກ່າວກັບເຈົ້າ
ອີກວ່າ ພຣະບິດາໄດ້ແຍກເຜົ່າອື່ນໆອີກ
ອອກຈາກພວກເຂົາ; ແລະ ເພາະຄວາມ
ຊົ່ວຮ້າຍຂອງພວກເຂົາ, ພວກເຂົາຈຶ່ງບໍ່ຮູ້
ຈັກຫຍັງເລີຍກ່ຽວກັບຜູ້ຄົນເຫລົ່ານັ້ນ.
21 ແລະ ຕາມຈິງແລ້ວເຮົາກ່າວກັບເຈົ້າ
ວ່າ: ເຈົ້ານີ້ແຫລະຄືຜູ້ຄົນທີ່ເຮົາກ່າວເຖິງ
ວ່າ: ເຮົາມີແກະ [ກ]ອື່ນອີກ ຊຶ່ງບໍ່ເປັນຂອງຝູງ
ນີ້; ແກະເຫລົ່ານັ້ນເຮົາຕ້ອງພາມາເໝືອນ
ກັນ, ແລ້ວພວກເຂົາຈະຟັງສຽງຂອງເຮົາ;
ແລ້ວຈະຮ່ວມເປັນຝູງດຽວກັນ, ແລະ ມີຜູ້
ລ້ຽງແຕ່ພຽງຜູ້ດຽວ.
22 ແຕ່ພວກເຂົາບໍ່ເຂົ້າໃຈເຮົາ, ເພາະ
ພວກເຂົາຄິດວ່າເປັນ [ກ]ຄົນຕ່າງຊາດ;
ເພາະພວກເຂົາບໍ່ເຂົ້າໃຈວ່າ ຄົນຕ່າງຊາດ
ຈະ [ຂ]ປ່ຽນໃຈເຫລື້ອມໃສໂດຍທາງການສັ່ງ
ສອນຂອງພວກເຂົາ.
23 ແລະ ພວກເຂົາບໍ່ເຂົ້າໃຈເຮົາ ເມື່ອ
ເຮົາກ່າວວ່າ ພວກເຂົາຈະໄດ້ຍິນສຽງຂອງ
ເຮົາ; ແລະ ພວກເຂົາບໍ່ເຂົ້າໃຈເຮົາທີ່ວ່າ
[ກ]ຄົນຕ່າງຊາດຈະບໍ່ໄດ້ຍິນສຽງຂອງເຮົາ ບໍ່
ວ່າເວລາໃດກໍຕາມ—ວ່າເຮົາຈະບໍ່ສະແດງ
ຕົນໃຫ້ປະຈັກແກ່ພວກເຂົານອກຈາກຈະ
ເປັນໂດຍ [ຂ]ພຣະວິນຍານບໍລິສຸດເທົ່ານັ້ນ.
24 ແຕ່ຈົ່ງເບິ່ງ, ເຈົ້າທັງໄດ້ຍິນ [ກ]ສຽງຂອງ
ເຮົາ, ແລະ ໄດ້ເຫັນເຮົາ; ແລະ ເຈົ້າຄືແກະ
ຂອງເຮົາ, ແລະ ເຈົ້າຖືກນັບເຂົ້າຢູ່ໃນບັນ
ດາຜູ້ຄົນທີ່ພຣະບິດາ [ຂ]ປະທານໃຫ້ແກ່ເຮົາ.

## ບົດທີ 16

*ພຣະເຢຊູຈະຢ້ຽມຢາມແກະອື່ນອີກທີ່ເສຍໄປຂອງອິດສະຣາເອນ—ໃນຍຸກສຸດທ້າຍພຣະກິດຕິຄຸນຈະໄປຫາຄົນຕ່າງຊາດ ແລ້ວຈຶ່ງໄປຫາເຊື້ອສາຍອິດສະຣາເອນ—ຜູ້ຄົນຂອງພຣະຜູ້ເປັນເຈົ້າຈະໄດ້ເຫັນດ້ວຍຕາຂອງຕົນເອງເມື່ອພຣະອົງນຳຊີໂອນຄືນມາອີກ. ປະມານ ຄ.ສ. 34.*

1 ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າວ່າ ເຮົາມີ [ກ]ແກະອື່ນອີກ ຊຶ່ງບໍ່ໄດ້ຢູ່
ໃນແຜ່ນດິນນີ້, ທັງບໍ່ໄດ້ຢູ່ໃນແຜ່ນດິນເຢຣູ
ຊາເລັມ, ທັງບໍ່ໄດ້ຢູ່ໃນສ່ວນໃດສ່ວນໜຶ່ງ
ຂອງແຜ່ນດິນນັ້ນໂດຍຮອບ ທີ່ເຮົາເຄີຍໄດ້
ປະຕິບັດສາດສະໜາກິດ.
2 ເພາະວ່າຄົນທີ່ເຮົາກຳລັງເວົ້າເຖິງນີ້ຄື
ຄົນທີ່ບໍ່ທັນໄດ້ຍິນສຽງຂອງເຮົາເທື່ອ; ແລະ

17 *ກ* ຄມພ ຜູ້ລ້ຽງທີ່ດີ.
18 *ກ* ຄພ 10:59.
21 *ກ* ຢຮ 10:14–16.
22 *ກ* ຄມພ ຄົນຕ່າງຊາດ.
*ຂ* ກຈກ 10:34–48.
23 *ກ* ມທ 15:24.
*ຂ* 1 ນຟ 10:11.
ຄມພ ພຣະວິນຍານບໍລິສຸດ.
24 *ກ* ແອວ 5:38;
3 ນຟ 16:1–5.
*ຂ* ຢຮ 6:37;
ຄພ 27:14.
**16** 1 *ກ* 3 ນຟ 15:15.
ຄມພ ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.

ເຮົາ ກໍ ບໍ່ ເຄີຍ ສະແດງ ຕົນ ໃຫ້ ປະຈັກ ແກ່
ພວກເຂົາຈັກເທື່ອ.
3 ແຕ່ ວ່າ ເຮົາ ໄດ້ ຮັບ ພຣະ ບັນ ຊາ ຈາກ
ພຣະບິດາວ່າ ໃຫ້ເຮົາໄປຫາ [ກ]ພວກ ເຂົາ,
ແລະ ໃຫ້ພວກເຂົາຍິນສຽງຂອງເຮົາ, ແລະ
ຈະນັບພວກເຂົາເຂົ້າຢູ່ໃນບັນດາແກະຂອງ
ເຮົາ, ເພື່ອຈະຮ່ວມເປັນຝູງດຽວກັນ ແລະ ມີ
ຜູ້ລ້ຽງແຕ່ພຽງຜູ້ດຽວ; ສະນັ້ນ ເຮົາຈຶ່ງຈະໄປ
ປະກົດຕົວແກ່ພວກເຂົາ.
4 ແລະ ເຮົາບັນຊາເຈົ້າວ່າ ຈົ່ງຂຽນ [ກ]ຂໍ້
ຄວາມເຫລົ່ານີ້ໄວ້ຫລັງຈາກທີ່ເຮົາໄປແລ້ວ,
ແລະ ຖ້າຫາກເປັນໄປວ່າ ຜູ້ຄົນຂອງເຮົາທີ່
ເຢຣູຊາເລັມຜູ້ທີ່ເຄີຍເຫັນເຮົາ ແລະ ຢູ່ກັບ
ເຮົາໃນການປະຕິບັດສາດສະໜາກິດຂອງ
ເຮົາ, ບໍ່ທູນຂໍພຣະບິດາໃນນາມຂອງເຮົາ
ເພື່ອພວກເຂົາຈະໄດ້ຮັບຄວາມຮູ້ເລື່ອງເຈົ້າ
ໂດຍພຣະວິນຍານບໍລິສຸດ, ແລະ ເລື່ອງເຜົ່າ
ອື່ນໆຊຶ່ງພວກເຂົາບໍ່ຮູ້ຈັກ ເພື່ອວ່າຂໍ້ຄວາມ
ເຫລົ່ານີ້ຊຶ່ງເຈົ້າຈະຂຽນໄວ້ ຈະໄດ້ຮັບການ
ຮັກສາໄວ້ ແລະ ຖືກສະແດງໃຫ້ປະກົດແກ່
[ຂ]ຄົນຕ່າງຊາດ, ເພື່ອໂດຍທາງຄວາມບໍລິ
ບູນຂອງຄົນຕ່າງຊາດ ພວກທີ່ເຫລືອຢູ່ຂອງ
ລູກຫລານຂອງພວກເຂົາ, ຊຶ່ງຈະກະຈັດກະ
ຈາຍໄປຕາມພື້ນແຜ່ນດິນໂລກເພາະຄວາມ
ບໍ່ເຊື່ອຖືຂອງພວກເຂົາຈະຖືກນຳເຂົ້າມາ,
ຫລື ຈະຖືກນຳມາສູ່ [ຄ]ຄວາມຮູ້ເລື່ອງເຮົາ,
ພຣະຜູ້ໄຖ່ຂອງພວກເຂົາ.
5 ແລະ ເມື່ອ ນັ້ນ ເຮົາ ຈະ [ກ]ເຕົ້າ ໂຮມ
ພວກເຂົາເຂົ້າມາຈາກສີ່ສ່ວນຂອງແຜ່ນ
ດິນໂລກ; ແລະ ເມື່ອນັ້ນເຮົາຈະເຮັດໃຫ້
[ຂ]ພັນທະສັນຍາຊຶ່ງພຣະບິດາໄດ້ກະທຳໄວ້
ກັບຜູ້ຄົນທັງໝົດຂອງ [ຄ]ເຊື້ອສາຍອິດສະ
ຣາເອນສຳເລັດ.
6 ແລະ [ກ]ຄົນ ຕ່າງ ຊາດ ຍ່ອມ ເປັນ ສຸກ,
ເພາະຄວາມ ເຊື່ອ ຂອງພວກເຂົາທີ່ມີໃນ
ເຮົາ, ໂດຍຜ່ານທາງ [ຂ]ພຣະວິນຍານບໍລິ
ສຸດທີ່ໄດ້ເປັນພະຍານຕໍ່ພວກເຂົາເຖິງເຮົາ
ແລະ ເຖິງພຣະບິດາ.
7 ຈົ່ງ ເບິ່ງ, ເພາະ ຄວາມ ເຊື່ອ ຂອງ ພວກ
ເຂົາທີ່ມີໃນເຮົາ, ພຣະບິດາໄດ້ກ່າວ, ແລະ
ເພາະຄວາມບໍ່ເຊື່ອຖືຂອງເຈົ້າ, ໂອ້ ເຊື້ອ
ສາຍອິດສະຣາເອນ, ດັ່ງນັ້ນ ໃນ [ກ]ຍຸກສຸດ
ທ້າຍຄວາມຈິງຈຶ່ງຈະມາເຖິງຄົນຕ່າງຊາດ,
ເພື່ອວ່າຄວາມສົມບູນຂອງເລື່ອງເຫລົ່ານີ້
ຈະໄດ້ເປັນທີ່ຮູ້ຈັກແກ່ພວກເຂົາ.
8 ແຕ່ພຣະບິດາໄດ້ກ່າວວ່າ, ວິບັດແກ່
ຄົນຕ່າງຊາດຜູ້ທີ່ບໍ່ເຊື່ອ—ເພາະວ່າທັງໆທີ່
ພວກເຂົາໄດ້ມາຢູ່ໃນພື້ນແຜ່ນດິນນີ້ ແລະ
ໄດ້ເຮັດໃຫ້ຜູ້ຄົນຂອງເຮົາ ຊຶ່ງເປັນຂອງ
ເຊື້ອສາຍອິດສະຣາເອນຕ້ອງແຕກ [ກ]ກະ
ຈັດກະຈາຍໄປ; ແລະ ໄດ້ [ຂ]ຂັບໄລ່ຜູ້ຄົນ
ຂອງເຮົາ ຊຶ່ງເປັນເຊື້ອສາຍອິດສະຣາເອນ
ອອກຈາກບັນດາພວກເຂົາ ແລະ ຖືກຢຽບ
ຍ່ຳໄວ້ໃຕ້ຕີນຂອງພວກເຂົາ;
9 ແລະ ເປັນ ຍ້ອນ ພຣະ ເມດຕາ ຂອງ
ພຣະບິດາທີ່ມີຕໍ່ຄົນຕ່າງຊາດ, ແລະ ການ
ພິພາກສາຂອງພຣະບິດາທີ່ມີຕໍ່ຜູ້ຄົນຂອງ
ເຮົາຜູ້ເປັນເຊື້ອສາຍອິດສະຣາເອນນຳອີກ,
ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ,
ວ່າຫລັງຈາກທັງໝົດນີ້ ແລະ ເຮົາໄດ້ເຮັດ

3 *ກ* 3 ນຟ 17:4.
4 *ກ* ຄມພ ພຣະຄຳພີ.
*ຂ* 1 ນຟ 10:14; 3 ນຟ 21:6.
*ຄ* ອຊກ 20:42–44; 3 ນຟ 20:13.
5 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* 3 ນຟ 5:24–26.
*ຄ* 1 ນຟ 22:9; 3 ນຟ 21:26–29.
6 *ກ* 1 ນຟ 13:30–42; 2 ນຟ 30:3.
*ຂ* 2 ນຟ 32:5; 3 ນຟ 11:32, 35–36. ຄມພ ພຣະວິນຍານບໍລິສຸດ.
7 *ກ* ຄມພ ການຟື້ນຟູພຣະກິດຕິຄຸນ.
8 *ກ* 1 ນຟ 13:14; ມມ 5:9, 15.
*ຂ* 3 ນຟ 20:27–29.

ໃຫ້ຜູ້ຄົນຂອງເຮົາ ຊຶ່ງເປັນເຊື້ອສາຍອິດສະ
ຣາເອນໄດ້ຮັບການລົງທັນ, ແລະ ໄດ້ຮັບ
ຄວາມເປັນທຸກ ແລະ ຖືກ [ກ]ຂ້າ, ແລະ ຖືກ
ຂັບໄລ່ອອກໄປຈາກບັນດາພວກເຂົາ,
ແລະ ຖືກພວກເຂົາກຽດຊັງ ແລະ ຖືກພວກ
ເຂົາເວົ້າຂວັນນິນທາ—
10 ແລະ ພຣະບິດາບັນຊາໃຫ້ເຮົາກ່າວ
ກັບເຈົ້າດັ່ງນີ້ວ່າ: ໃນມື້ນັ້ນເມື່ອຄົນຕ່າງ
ຊາດເຮັດບາບເພື່ອຕໍ່ຕ້ານພຣະກິດຕິຄຸນ
ແລະປະຕິເສດຄວາມສົມບູນແຫ່ງພຣະກິດ
ຕິຄຸນຂອງເຮົາ, ແລະ [ກ]ລະເມີເພີ້ຝັນດ້ວຍ
ຄວາມທະນົງໃຈ ເໜືອກວ່າປະຊາຊາດທັງ
ປວງ, ແລະ ເໜືອກວ່າຜູ້ຄົນທັງປວງເທິງ
ແຜ່ນດິນໂລກ, ແລະ ຈະເຕັມໄປດ້ວຍການ
ເວົ້າຕົວະ, ແລະ ການຫລອກລວງ, ແລະ
ການກໍ່ກວນ, ແລະ ການໜ້າຊື່ໃຈຄົດ, ແລະ
ການຄາດຕະກຳ, ແລະ ການປະຕິບັດໂດຍ
[ຂ]ການຫລອກລວງຂອງປະໂລຫິດ, ແລະ
ການໂສເພນີ, ແລະ ຄວາມໜ້າກຽດຊັງອັນ
ລີ້ລັບນາໆປະການ; ແລະ ຖ້າຫາກເມື່ອໃດ
ພວກເຂົາກະທຳສິ່ງທັງໝົດນີ້ ແລະ ບໍ່ຍອມ
ຮັບຄວາມສົມບູນແຫ່ງພຣະກິດຕິຄຸນຂອງ
ເຮົາ, ຈົ່ງເບິ່ງ, ພຣະບິດາໄດ້ກ່າວວ່າ, ເຮົາ
ຈະເອົາຄວາມສົມບູນແຫ່ງພຣະກິດຕິຄຸນ
ຂອງເຮົາໄປຈາກບັນດາພວກເຂົາ.
11 ແລະ ເວລານັ້ນເຮົາຈະ [ກ]ນຶກເຖິງ
ພັນທະສັນຍາທີ່ເຮົາໄດ້ກະທຳໄວ້ກັບຜູ້ຄົນ
ຂອງເຮົາ, ໂອ້ ເຊື້ອສາຍອິດສະຣາເອນ,
ແລະ ເຮົາຈະນຳເອົາພຣະກິດຕິຄຸນຂອງ
ເຮົາມາຫາພວກເຂົາ.
12 ແລະ ແລ້ວເຮົາຈະສະແດງແກ່ເຈົ້າ,
ໂອ້ ເຊື້ອສາຍອິດສະຣາເອນ, ວ່າຄົນຕ່າງ
ຊາດຈະບໍ່ມີອຳນາດເໜືອເຈົ້າ; ແຕ່ເຮົາຈະ
ນຶກເຖິງພັນທະສັນຍາຂອງເຮົາທີ່ໄດ້ໃຫ້ແກ່
ເຈົ້າ, ໂອ້ ເຊື້ອສາຍອິດສະຣາເອນ, ແລະ
ເຈົ້າຈະມາສູ່ [ກ]ຄວາມຮູ້ເລື່ອງຄວາມສົມບູນ
ແຫ່ງພຣະກິດຕິຄຸນຂອງເຮົາ.
13 ແຕ່ຖ້າຫາກຄົນຕ່າງຊາດຈະກັບໃຈ
ແລະ ກັບມາຫາເຮົາ, ພຣະບິດາໄດ້ກ່າວ,
ຈົ່ງເບິ່ງ ໂອ້ ເຊື້ອສາຍອິດສະຣາເອນ, ເຮົາ
ຈະ [ກ]ນັບພວກເຂົາເຂົ້າຢູ່ໃນບັນດາຜູ້ຄົນ
ຂອງເຮົາ.
14 ແລະ ເຮົາຈະບໍ່ຍອມໃຫ້ຜູ້ຄົນຂອງ
ເຮົາ ຊຶ່ງເປັນເຊື້ອສາຍອິດສະຣາເອນເຂົ້າ
ໄປໃນບັນດາພວກເຂົາເພື່ອຢຽບຢ່ຳພວກ
ເຂົາ, ພຣະບິດາໄດ້ກ່າວ.
15 ແຕ່ຖ້າຫາກພວກເຂົາບໍ່ຫັນມາຫາ
ເຮົາ, ແລະ ບໍ່ເຊື່ອຟັງສຽງຂອງເຮົາ, ເຮົາ
ຈະຍອມໃຫ້ພວກເຂົາ, ແທ້ຈິງແລ້ວ, ເຮົາ
ຈະຍອມໃຫ້ຜູ້ຄົນຂອງເຮົາ, ໂອ້ ເຊື້ອສາຍ
ອິດສະຣາເອນ, ເຂົ້າໄປໃນບັນດາພວກ
ເຂົາ ແລະ [ກ]ຢຽບຢ່ຳພວກເຂົາ, ແລະ ພວກ
ເຂົາຈະເປັນເໝືອນດັ່ງເກືອທີ່ໝົດຄວາມ
ເຄັມ ຊຶ່ງນັບແຕ່ເວລານັ້ນໄປ ມັນຈະບໍ່ມີຄຸນ
ຄ່າ, ມີແຕ່ຈະຖືກໂຍນຖິ້ມ ແລະ ຖືກຢຽບ
ຢ່ຳໄວ້ໃຕ້ຕີນຂອງຜູ້ຄົນຂອງເຮົາ, ໂອ້ ເຊື້ອ
ສາຍອິດສະຣາເອນ.
16 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ພຣະບິດາໄດ້ສັ່ງເຮົາໄວ້ດັ່ງນີ້
ຄື—ໃຫ້ເຮົາມອບແຜ່ນດິນນີ້ໃຫ້ແກ່ຜູ້ຄົນ
ພວກນີ້ ເພື່ອເປັນມູນມໍລະດົກຂອງພວກ
ເຂົາ.

9 *ກ* ອມ 9:1–4.
10 *ກ* ມມ 8:35–41.
10 *ຂ* 2 ນຟ 26:29.
11 *ກ* 3 ນຟ 21:1–11; ມມ 5:20.
12 *ກ* ຣລມ 15:12–13.
13 *ກ* ຄລຕ 3:7, 29; 1 ນຟ 15:13–17; 2 ນຟ 10:18; 3 ນຟ 30:2; ອຣຣ 2:9–11.
15 *ກ* ມກ 5:8–15; 3 ນຟ 20:16–19; 21:12–21; ຄພ 87:5.

17 ແລະ ເວລາ ນັ້ນ [ກ]ຄຳ ເວົ້າ ຂອງ ສາດ
ສະດາເອຊາຢາຈະສຳເລັດ, ຊຶ່ງກ່າວວ່າ:
18 [ກ]ຄົນ ຍາມ [ຂ]ຂ ອງ ເຈົ້າ ຈະ ເປັ່ງ ສຽງ;
ພວກເຂົາຈະຮ້ອງເພງພ້ອມກັນ, ເພາະວ່າ
ພວກເຂົາຈະເຫັນພ້ອມກັນ ເວລາທີ່ພຣະຜູ້
ເປັນເຈົ້ານຳຊີໂອນມາອີກ.
19 ຈົ່ງ ເປັ່ງສຽງປິຕິຍິນດີ, ຮ້ອງເພງນຳ
ກັນ, ກຸງ ເຢຣູ ຊາ ເລັມ ເອີຍ ເຈົ້າຜູ້ ທີ່ ເປັນ
ເມືອງຮົກຮ້າງ; ເພາະພຣະຜູ້ເປັນເຈົ້າໄດ້
ອອຍໃຈຜູ້ຄົນຂອງພຣະອົງແລ້ວ, ພຣະອົງ
ໄດ້ໄຖ່ກຸງເຢຣູຊາເລັມແລ້ວ.
20 ພຣະຜູ້ເປັນເຈົ້າໄດ້ກາງແຂນອັນສັກ
ສິດຂອງພຣະອົງໃນສາຍຕາຂອງປະຊາ
ຊາດທັງປວງ; ແລະ ທົ່ວທີ່ສຸດຂອງແຜ່ນດິນ
ໂລກຈະເຫັນການຊ່ວຍໃຫ້ລອດຂອງພຣະ
ເຈົ້າ.

## ບົດທີ 17

*ພຣະ ເຢຊູ ແນະນຳ ໃຫ້ຝູງຊົນ ໄຕ່ຕອງກ່ຽວ ກັບ ຄຳ ເວົ້າ ຂອງພຣະອົງ ແລະ ອະທິຖານ ເພື່ອຄວາມ ເຂົ້າ ໃຈ—ພຣະອົງປິ່ນປົວຄົນ ເຈັບ ປ່ວຍ—ພຣະອົງອະທິຖານ ເພື່ອ ຝູງ ຊົນ ໂດຍ ໃຊ້ພາສາທີ່ບໍ່ສາມາດ ຈະຂຽນໄວ້ ໄດ້—ເຫລົ່າທູດປະຕິບັດສາດສະໜາກິດ ແກ່ເດັກນ້ອຍ ແລະ ໄຟໄດ້ອ້ອມຮອບລູກໆ ຂອງພວກເຂົາໄວ້. ປະມານ ຄ.ສ. 34.*

1 ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້
ແລ້ວ, ພຣະອົງໄດ້ທອດພຣະເນດເບິ່ງຝູງ
ຊົນໂດຍຮອບອີກ, ແລະ ພຣະອົງກ່າວກັບ
ພວກເຂົາວ່າ: ຈົ່ງເບິ່ງ, [ກ]ເວລາຂອງເຮົາໃກ້
ເຂົ້າມາເຖິງແລ້ວ.
2 ເຮົາ ເຫັນວ່າ ເຈົ້າຍັງອ່ອນແອຢູ່ ແລະ
ເຈົ້າຍັງບໍ່ [ກ]ເຂົ້າໃຈຄຳເວົ້າທັງໝົດຂອງເຮົາ
ໄດ້, ຊຶ່ງ ພຣະ ບິດາ ໄດ້ ບັນ ຊາ ໃຫ້ ເຮົາ ມາ
ບອກເຈົ້າໃນເທື່ອນີ້.
3 ສະນັ້ນ, ເຈົ້າຈົ່ງກັບໄປບ້ານຂອງເຈົ້າ,
ແລະ [ກ]ໄຕ່ຕອງເຖິງເລື່ອງທີ່ເຮົາໄດ້ກ່າວໄປ
ນັ້ນ, ແລະ ທູນຖາມພຣະບິດາໃນນາມຂອງ
ເຮົາ, ເພື່ອຈະໄດ້ເຂົ້າໃຈ ແລະ ຈົ່ງ [ຂ]ຕຽມ
ຈິດໃຈໄວ້ສຳລັບ [ຄ]ມື້ອື່ນ, ແລະ ເຮົາຈະກັບ
ມາຫາເຈົ້າອີກ.
4 ແຕ່ບັດນີ້ເຮົາຈະ [ກ]ໄປເຝົ້າພຣະບິດາ,
ແລະ ເຮົາຈະໄປ [ຂ]ປະກົດຕົວຕໍ່ເຜົ່າອິດສະ
ຣາເອນທີ່ [ຄ]ຫາຍໄປນັ້ນ, ເພາະວ່າພວກ
ເຂົາບໍ່ໄດ້ຫາຍໄປສຳລັບພຣະບິດາ, ເພາະ
ພຣະອົງຮູ້ວ່າພຣະອົງໄດ້ນຳພວກເຂົາໄປ
ໄວ້ບ່ອນໃດ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ກ່າວດັ່ງນີ້ແລ້ວ, ພຣະອົງໄດ້
ທອດພຣະເນດເບິ່ງຝູງຊົນໂດຍຮອບອີກ,
ແລະ ເຫັນວ່າພວກເຂົາຫລັ່ງນ້ຳຕາ, ແລະ
ໄດ້ຫລຽວເບິ່ງພຣະອົງຄືກັບວ່າຈະທູນຂໍໃຫ້
ພຣະອົງຢູ່ກັບພວກເຂົາຕື່ມອີກໜ້ອຍໜຶ່ງ.
6 ແລະ ພຣະອົງໄດ້ກ່າວກັບພວກເຂົາ
ວ່າ: ຈົ່ງເບິ່ງ, ອຸທອນຂອງເຮົາເຕັມໄປດ້ວຍ
[ກ]ຄວາມເມດຕາສົງສານເຈົ້າ.
7 ມີຜູ້ໃດເຈັບປ່ວຍຢູ່ໃນບັນດາພວກເຈົ້າ
ບໍ່? ຈົ່ງນຳເອົາພວກເຂົາມານີ້. ມີຜູ້ໃດທີ່
ເປັນລ່ອຍ, ຫລື ຕາບອດ, ຫລື ຂາເສຍ, ຫລື
ພິການ, ຫລື ເປັນຂີ້ທູດ, ຫລື ຫ່ຽວແຫ້ງ, ຫລື

---

16:17 ກ 3 ນຟ 20:11–12.
18 ກ ອຊກ 33:1–7.
ຄມພ ຍາມ, ຄົນຍາມ.
ຂ ອຊຢ 52:8–10.
**17** 1 ກ ອສ ກັບຄືນໄປຫາ
ພຣະບິດາ. ເບິ່ງ ຂໍ້ທີ 4.
2 ກ ຢຣ 16:12;
ຄພ 78:17–18.
3 ກ ຄມພ ໄຕ່ຕອງ.
ຂ ຄພ 132:3.
ຄ 3 ນຟ 19:2.
4 ກ 3 ນຟ 18:39.
ຂ 3 ນຟ 16:1–3.
ຄ ຄມພ ອິດສະຣາເອນ—
ສິບເຜົ່າທີ່ຫາຍໄປຂອງ
ອິດສະຣາເອນ.
6 ກ ຄມພ ເມດຕາສົງສານ,
ຄວາມເມດຕາສົງສານ.

ຫູໜວກ, ຫລື ເປັນທຸກອັນໃດບໍ່? ຈົ່ງນຳເອົາ
ພວກເຂົາມານີ້ ແລະ ເຮົາຈະປິ່ນປົວພວກ
ເຂົາ, ເພາະເຮົາມີຄວາມເມດຕາສົງສານ
ເຈົ້າ; ອຸທອນຂອງເຮົາເຕັມໄປດ້ວຍຄວາມ
ເມດຕາສົງສານ.
8 ເພາະເຮົາເຫັນວ່າເຈົ້າປາດຖະໜາຈະ
ໃຫ້ເຮົາສະແດງແກ່ເຈົ້າ ເຖິງສິ່ງທີ່ເຮົາໄດ້
ກະທຳແກ່ພີ່ນ້ອງຂອງເຈົ້າທີ່ເຢຣູຊາເລັມ,
ເພາະເຮົາເຫັນວ່າເຈົ້າມີ [ກ]ສັດທາ [ຂ]ພຽງພໍທີ່
ຈະໃຫ້ເຮົາປິ່ນປົວເຈົ້າ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະອົງກ່າວດັ່ງນີ້ແລ້ວ, ຝູງຊົນທັງໝົດໄດ້
ອອກໄປພ້ອມກັນ, ພ້ອມດ້ວຍຄົນເຈັບຂອງ
ພວກເຂົາ ແລະ ຄົນເປັນທຸກຂອງພວກ
ເຂົາ, ແລະ ຄົນເປ້ຍລ່ອຍຂອງພວກເຂົາ,
ແລະ ຄົນຕາບອດຂອງພວກເຂົາ, ແລະ
ຄົນໃບ້ຂອງພວກເຂົາ, ແລະ ພ້ອມດ້ວຍຄົນ
ທັງໝົດທີ່ເປັນທຸກໃດໆ; ແລະ ພຣະອົງໄດ້
[ກ]ປິ່ນປົວພວກເຂົາທຸກຄົນ ເມື່ອພວກເຂົາ
ຖືກພາມາຫາພຣະອົງ.
10 ແລະ ພວກເຂົາທັງໝົດ ທັງຜູ້ທີ່ໄດ້ຮັບ
ການປິ່ນປົວ ແລະ ຜູ້ມີສຸຂະພາບແຂງແຮງ,
ໄດ້ກົ້ມຂາບລົງແທບພຣະບາດ ແລະ ໄດ້
ນະມັດສະການພຣະອົງ; ແລະ ຝູງຊົນເປັນ
ຈຳນວນຫລວງຫລາຍໄດ້ອອກມາ [ກ]ຈູບ
ພຣະບາດຂອງພຣະອົງ, ເຖິງຂະໜາດທີ່
ພວກເຂົາໄດ້ລ້າງພຣະບາດຂອງພຣະອົງ
ດ້ວຍນ້ຳຕາຂອງພວກເຂົາ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະອົງໄດ້ສັ່ງໃຫ້ນຳເອົາ [ກ]ເດັກນ້ອຍໆ
ຂອງພວກເຂົາມາ.
12 ດັ່ງນັ້ນ ພວກເຂົາຈຶ່ງໄດ້ນຳເອົາເດັກ
ນ້ອຍໆຂອງພວກເຂົາມານັ່ງຢູ່ພື້ນດິນອ້ອມ
ຮອບພຣະອົງ, ແລະ ພຣະເຢຊູໄດ້ປະທັບ
ຢືນຢູ່ເຄິ່ງກາງ; ແລະ ຝູງຊົນໄດ້ເປີດທາງ
ໃຫ້ຜູ້ຄົນນຳເອົາເດັກນ້ອຍທັງໝົດເຂົ້າມາ
ຫາພຣະອົງ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຂົາໄດ້ນຳເອົາເດັກນ້ອຍທັງໝົດມາ
ແລ້ວ, ແລະ ພຣະເຢຊູປະທັບຢືນຢູ່ເຄິ່ງ
ກາງ, ພຣະອົງຈຶ່ງໄດ້ສັ່ງໃຫ້ຝູງຊົນ [ກ]ຄຸເຂົ່າ
ລົງຢູ່ກັບພື້ນດິນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຂົາໄດ້ຄຸເຂົ່າລົງຢູ່ກັບພື້ນດິນແລ້ວ,
ພຣະເຢຊູຮ້ອງຄວນຄາງຢູ່ພາຍໃນພຣະ
ອົງ, ແລະ ກ່າວວ່າ: ຂ້າແດ່ພຣະບິດາ, ຂ້າ
ນ້ອຍ [ກ]ຫຍຸ້ງຍາກຈິດໃຈຫລາຍ ເພາະ
ຄວາມຊົ່ວຮ້າຍຂອງຜູ້ຄົນທີ່ເປັນເຊື້ອສາຍ
ອິດສະຣາເອນ.
15 ແລະ ເມື່ອ ພຣະ ອົງ ກ່າວ ຂໍ້ ຄວາມ
ເຫລົ່ານີ້ແລ້ວ, ພຣະອົງໄດ້ຄຸເຂົ່າລົງຢູ່ກັບ
ພື້ນດິນຄືກັນ; ແລະ ຈົ່ງເບິ່ງ ພຣະອົງໄດ້ອະ
ທິຖານຫາພຣະບິດາ, ແລະ ສິ່ງທີ່ພຣະອົງ
ອະທິຖານນັ້ນບໍ່ອາດຈະຂຽນໄວ້ໄດ້, ແລະ
ຝູງຊົນທີ່ໄດ້ຍິນພຣະອົງໄດ້ເປັນພະຍານ
ເຖິງສິ່ງເຫລົ່ານີ້.
16 ແລະ ຕາມວິທີນີ້ທີ່ພວກເຂົາໄດ້ເປັນ
ພະຍານ: [ກ]ຕາບໍ່ເຄີຍໄດ້ເຫັນ ແລະ ຫູບໍ່
ເຄີຍໄດ້ຍິນເລື່ອງອັນຍິ່ງໃຫຍ່ ແລະ ໜ້າ
ອັດສະຈັນເຊັ່ນນີ້ມາກ່ອນ ດັ່ງທີ່ພວກເຮົາ
ໄດ້ເຫັນ ແລະ ໄດ້ຍິນເລື່ອງທີ່ພຣະເຢຊູໄດ້
ກ່າວກັບພຣະບິດາ;

8 ກ ລກ 18:42.
ຂ 2 ນຟ 27:23;
ອທ 12:12.
9 ກ ມຊຢ 3:5;
3 ນຟ 26:15.
10 ກ ລກ 7:38.
11 ກ ມທ 19:13–14;
3 ນຟ 26:14, 16.
13 ກ ລກ 22:41;
ກຈກ 20:36.
14 ກ ມຊ 7:41.
16 ກ ອຊຢ 64:4;
1 ກຣທ 2:9;
ຄພ 76:10, 114–119.

17 ແລະ ບໍ່ມີ [ກ]ລີ້ນໃດຈະເວົ້າໄດ້, ທັງບໍ່
ມີຄົນໃດຈະຂຽນໄວ້ໄດ້, ທັງໃຈຂອງມະນຸດ
ຈະເຂົ້າໃຈເລື່ອງຍິ່ງໃຫຍ່ ແລະ ໜ້າອັດສະ
ຈັນເຊັ່ນນີ້ບໍ່ໄດ້ ດັ່ງທີ່ພວກເຮົາທັງໄດ້ເຫັນ
ແລະ ໄດ້ຍິນພຣະເຢຊູກ່າວ; ແລະ ບໍ່ມີຜູ້ໃດ
ເຂົ້າໃຈໄດ້ເຖິງຄວາມສຸກ ຊຶ່ງເຕັມຈິດວິນ
ຍານຂອງພວກເຮົາໃນເວລາທີ່ພວກເຮົາ
ໄດ້ຍິນພຣະອົງອະທິຖານຕໍ່ພຣະບິດາເພື່ອ
ພວກເຮົາ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູຈົບການອະທິຖານຫາພຣະບິດາ
ແລ້ວ, ພຣະອົງກໍລຸກຂຶ້ນ; ແຕ່ [ກ]ຄວາມສຸກ
ຂອງຝູງຊົນນັ້ນຍັງມີຢູ່ຢ່າງຖ້ວມລົ້ນຈົນວ່າ
ພວກເຂົາໝົດກຳລັງໄປ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະເຢຊູໄດ້ກ່າວກັບພວກເຂົາ, ແລະ
ບອກໃຫ້ພວກເຂົາລຸກຂຶ້ນ.
20 ແລະ ພວກເຂົາໄດ້ລຸກຂຶ້ນຈາກພື້ນ
ດິນ, ແລະ ພຣະອົງໄດ້ກ່າວກັບພວກເຂົາ
ວ່າ: ເຈົ້າເປັນສຸກແລ້ວ ເພາະສັດທາຂອງ
ເຈົ້າ. ແລະ ບັດນີ້ຈົ່ງເບິ່ງ, ຄວາມສຸກຂອງ
ເຮົາເຕັມປ່ຽມ.
21 ແລະ ເມື່ອພຣະອົງໄດ້ກ່າວຂໍ້ຄວາມ
ເຫລົ່ານີ້ແລ້ວ, ພຣະອົງກໍ [ກ]ກັນແສງ, ແລະ
ຝູງຊົນໄດ້ເປັນພະຍານໃນເລື່ອງນີ້, ແລະ
ພຣະອົງໄດ້ເອົາເດັກນ້ອຍໆຂອງພວກເຂົາ
ມາເທື່ອລະຄົນ, ແລະ [ຂ]ອວຍພອນພວກ
ເຂົາ, ແລະ ອະທິຖານຫາພຣະບິດາເພື່ອ
ພວກເຂົາ.
22 ແລະ ເມື່ອພຣະອົງໄດ້ເຮັດສິ່ງນີ້ແລ້ວ,
ພຣະອົງກໍກັນແສງອີກ;
23 ແລະ ພຣະອົງໄດ້ກ່າວກັບຝູງຊົນ,
ແລະ ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງລູກ
ນ້ອຍໆຂອງເຈົ້າ.
24 ແລະ ເວລາພວກເຂົາຫລຽວໄປເບິ່ງ
ພວກເຂົາໄດ້ກວາດສາຍຕາຂຶ້ນໄປເທິງ
ຟ້າ, ແລະ ພວກເຂົາເຫັນຟ້າສະຫວັນເປີດ,
ແລະ ພວກເຂົາໄດ້ເຫັນເຫລົ່າທູດພາກັນ
ລົງມາຈາກສະຫວັນ ຄືກັບວ່າ ຢູ່ທ່າມກາງ
ໄຟ; ແລະ ພວກເພິ່ນໄດ້ລົງມາ [ກ]ອ້ອມຮອບ
ເດັກນ້ອຍເຫລົ່ານັ້ນໄວ້, ແລະ ພວກເຂົາ
ໄດ້ຖືກປິດລ້ອມໄວ້ດ້ວຍໄຟ; ແລະ ເຫລົ່າ
ທູດໄດ້ປະຕິບັດສາດສະໜາກິດແກ່ພວກ
ເຂົາ.
25 ແລະ ຝູງຊົນໄດ້ເຫັນ ແລະ ໄດ້ຍິນ
ແລະ ໄດ້ເປັນພະຍານ; ແລະ ພວກເຂົາ
ຮູ້ວ່າບັນທຶກຂອງພວກເຂົາ ເປັນຄວາມ
ຈິງ ເພາະພວກເຂົາທຸກຄົນໄດ້ເຫັນ, ແລະ
ໄດ້ຍິນດ້ວຍຕົວເອງ; ແລະ ພວກເຂົາມີ
ຈຳນວນຢູ່ປະມານສອງພັນຫ້າຮ້ອຍຄົນ,
ລວມທັງຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ.

## ບົດທີ 18

*ພຣະເຢຊູຈັດຕັ້ງສິນລະລຶກຂຶ້ນໃນບັນດາຊາວນີໄຟ—ພວກເຂົາຖືກສັ່ງໃຫ້ອະທິຖານເປັນປະຈຳໃນພຣະນາມຂອງພຣະອົງ—ຜູ້ທີ່ຮັບເນື້ອໜັງ ແລະ ໂລຫິດຂອງພຣະອົງໂດຍບໍ່ມີຄ່າຄວນ ຈະອັບປະໂຫຍດ—ສານຸສິດໄດ້ຮັບອຳນາດເພື່ອມອບພຣະວິນຍານບໍລິສຸດ. ປະມານ ຄ.ສ. 34.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ເຢຊູໄດ້ສັ່ງໃຫ້ສານຸສິດຂອງພຣະອົງໄປ
ເອົາ [ກ]ເຂົ້າຈີ່ ແລະ ເຫລົ້າອະງຸ່ນຈຳນວນ
ໜຶ່ງມາໃຫ້ພຣະອົງ.
2 ແລະ ໃນຂະນະທີ່ພວກເພິ່ນອອກໄປ

17 *ກ* 2 ກຣທ 12:4.
18 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
21 *ກ* ຢຮ 11:35.
*ຂ* ມຣກ 10:14–16.
24 *ກ* ຮລມ 5:23–24, 43–45.
**18** 1 *ກ* ມທ 26:26–28.

ຫາເຂົ້າຈີ່ ແລະ ເຫລົ້າອະງຸ່ນຢູ່ນັ້ນ, ພຣະ
ອົງໄດ້ສັ່ງໃຫ້ຝູງຊົນນັ່ງລົງຢູ່ພື້ນດິນ.
3 ແລະ ເມື່ອສານຸສິດກັບມາພ້ອມດ້ວຍ
[ກ]ເຂົ້າຈີ່ ແລະ ເຫລົ້າອະງຸ່ນ, ພຣະອົງໄດ້ຮັບ
ເອົາເຂົ້າຈີ່ ແລະ ຫັກມັນ ແລະ ໃຫ້ພອນແກ່
ມັນ; ແລະ ພຣະອົງໄດ້ມອບມັນໃຫ້ແກ່ສານຸ
ສິດ ແລະ ສັ່ງໃຫ້ພວກເພິ່ນກິນ.
4 ແລະ ເມື່ອພວກເພິ່ນໄດ້ກິນ ແລະ ອີ່ມ
ແລ້ວ, ພຣະອົງໄດ້ສັ່ງໃຫ້ພວກເພິ່ນເອົາໃຫ້
ຝູງຊົນກິນ.
5 ແລະ ເມື່ອ ຝູງ ຊົນ ໄດ້ ກິນ ແລະ ອີ່ມ
ແລ້ວ, ພຣະອົງໄດ້ກ່າວກັບສານຸສິດວ່າ: ຈົ່ງ
ເບິ່ງ ຈະມີຜູ້ໜຶ່ງໃນບັນດາພວກເຈົ້າ ທີ່ຈະ
ໄດ້ຮັບການແຕ່ງຕັ້ງ, ແລະ ເຮົາຈະມອບ
ອຳນາດໃຫ້ແກ່ລາວ ເພື່ອລາວຈະໄດ້ [ກ]ຫັກ
ເຂົ້າຈີ່ ແລະ ໃຫ້ພອນແກ່ມັນ ແລະ ເອົາມັນ
ໃຫ້ແກ່ຜູ້ຄົນຂອງສາດສະໜາຈັກຂອງເຮົາ,
ແລະ ໃຫ້ແກ່ທຸກຄົນທີ່ເຊື່ອ ແລະ ຮັບບັບຕິ
ສະມາໃນນາມຂອງເຮົາ.
6 ແລະ ສິ່ງນີ້ພວກເຈົ້າຈົ່ງຍຶດຖືປະຕິບັດ
ສະເໝີດັ່ງທີ່ເຮົາໄດ້ເຮັດ ຊຶ່ງເຮົາໄດ້ຫັກເຂົ້າ
ຈີ່ ແລະ ໃຫ້ພອນແກ່ມັນ ແລະ ເອົາໃຫ້ເຈົ້າ
ກິນ.
7 ແລະ ສິ່ງນີ້ເຈົ້າຈົ່ງເຮັດດ້ວຍ [ກ]ຄວາມ
ລະນຶກເຖິງເນື້ອກາຍຂອງເຮົາ, ຊຶ່ງເຮົາໄດ້
ສະແດງແກ່ເຈົ້າ. ແລະ ມັນຈະເປັນປະຈັກ
ພະຍານຕໍ່ພຣະບິດາວ່າ ເຈົ້າລະນຶກເຖິງ
ເຮົາຢູ່ຕະຫລອດເວລາ. ແລະ ຖ້າຫາກເຈົ້າ
ລະນຶກເຖິງເຮົາຢູ່ຕະຫລອດເວລາ ເຈົ້າຈະ
ມີວິນຍານຂອງເຮົາຢູ່ນຳເຈົ້າ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະອົງກ່າວຂໍ້ຄວາມເຫລົ່ານີ້ແລ້ວ, ພຣະ
ອົງໄດ້ສັ່ງໃຫ້ສານຸສິດຂອງພຣະອົງຮັບເອົາ
ຈອກເຫລົ້າອະງຸ່ນ ແລະ ດື່ມມັນ, ແລະ ໃຫ້
ພວກເພິ່ນມອບໃຫ້ແກ່ຝູງຊົນນຳອີກເພື່ອ
ພວກເຂົາຈະໄດ້ດື່ມມັນ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເພິ່ນກໍໄດ້ປະຕິບັດຕາມນີ້ ແລະ ໄດ້ດື່ມມັນ
ແລະ ອີ່ມ; ແລະ ພວກເພິ່ນໄດ້ມອບມັນໃຫ້
ແກ່ຝູງຊົນ, ແລະ ພວກເຂົາກໍໄດ້ດື່ມ ແລະ
ພວກເຂົາອີ່ມ.
10 ແລະ ເມື່ອສານຸສິດໄດ້ກະທຳສິ່ງນີ້
ແລ້ວ, ພຣະເຢຊູໄດ້ກ່າວກັບພວກເພິ່ນວ່າ:
ເຈົ້າເປັນສຸກແລ້ວ ເພາະສິ່ງນີ້ທີ່ເຈົ້າໄດ້ກະ
ທຳໄປນັ້ນ, ເພາະນີ້ເປັນການເຮັດໃຫ້ບັນ
ຍັດຂອງເຮົາສຳເລັດ ແລະ ນີ້ເປັນພະຍານ
ຕໍ່ພຣະບິດາວ່າ ເຈົ້າເຕັມໃຈປະຕິບັດຕາມ
ສິ່ງທີ່ເຮົາໄດ້ບັນຊາເຈົ້າ.
11 ແລະ ນີ້ເຈົ້າຈົ່ງປະຕິບັດສະເໝີໄປກັບ
ຄົນທີ່ກັບໃຈ ແລະ ຮັບບັບຕິສະມາໃນນາມ
ຂອງເຮົາ; ແລະ ເຈົ້າຈົ່ງກະທຳສິ່ງນີ້ດ້ວຍ
ຄວາມລະນຶກເຖິງເລືອດຂອງເຮົາ, ຊຶ່ງເຮົາ
ໄດ້ຫລັ່ງເພື່ອເຈົ້າ, ເພື່ອເຈົ້າຈະໄດ້ເປັນ
ພະຍານຕໍ່ພຣະບິດາວ່າ ເຈົ້າລະນຶກເຖິງ
ເຮົາຢູ່ຕະຫລອດເວລາ. ແລະ ຖ້າຫາກເຈົ້າ
ລະນຶກເຖິງເຮົາຢູ່ຕະຫລອດເວລາ ເຈົ້າຈະ
ມີວິນຍານຂອງເຮົາຢູ່ນຳເຈົ້າ.
12 ແລະ ເຮົາໃຫ້ບັນຍັດແກ່ເຈົ້າວ່າ ຈົ່ງ
ກະທຳສິ່ງເຫລົ່ານີ້. ແລະ ຖ້າຫາກເຈົ້າກະ
ທຳຕາມສິ່ງເຫລົ່ານີ້ສະເໝີ ເຈົ້າຍ່ອມເປັນ
ສຸກ, ເພາະເຈົ້າຖືກສ້າງຢູ່ເທິງ [ກ]ດານຫີນ
ຂອງເຮົາ.
13 ແຕ່ຜູ້ໃດໃນບັນດາພວກເຈົ້າຈະກະ
ທຳຫລາຍ ຫລື ນ້ອຍໄປກວ່ານີ້ຍ່ອມບໍ່ໄດ້
ຖືກສ້າງຢູ່ເທິງດານຫີນຂອງເຮົາ; ແຕ່ໄດ້
ຖືກສ້າງຢູ່ເທິງດິນຊາຍ; ແລະ ເມື່ອຝົນຖັ່ງ
ເທລົງມາ, ແລະ ນ້ຳກໍນອງ, ແລະ ລົມກໍພັດ,
ແລະ ປະທະພວກເຂົາ, ພວກເຂົາຈະ [ກ]ພັງ,

3 *ກ* ຄມພ ສິນລະລຶກ.
5 *ກ* ມຣນ 4.
7 *ກ* ມຣນ 4:3.
12 *ກ* ຄມພ ຫີນ.
13 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.

ແລະ [ຂ]ປະຕູ ນະລົກ ຈະ ເປີດ ອອກ ພ້ອມ
ແລ້ວທີ່ຈະຮັບເອົາພວກເຂົາ.
14 ສະນັ້ນ ເຈົ້າ ຍ່ອມເປັນສຸກ ຖ້າຫາກ
ເຈົ້າຈະຮັກສາບັນຍັດຂອງເຮົາ, ຊຶ່ງພຣະ
ບິດາໄດ້ບັນຊາເຮົາໃຫ້ມອບມັນແກ່ເຈົ້າ.
15 ຕາມ ຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າ, ຈົ່ງຄອຍເຝົ້າລະວັງ ແລະ [ກ]ອະທິ
ຖານຢູ່ສະເໝີ, ເພື່ອເຈົ້າຈະບໍ່ໄດ້ຖືກມານລໍ້
ລວງ, ແລະ ຖືກມັນນຳໄປເປັນຊະເລີຍ.
16 ແລະ ເຊັ່ນດຽວກັບທີ່ເຮົາໄດ້ອະທິ
ຖານໃນບັນດາພວກເຈົ້າ, ໃຫ້ເຈົ້າອະທິ
ຖານໃນສາດສະໜາຈັກຂອງເຮົາ ໃນບັນ
ດາຜູ້ຄົນຂອງເຮົາທີ່ກັບໃຈ ແລະ ຮັບບັບຕິ
ສະມາໃນນາມຂອງເຮົາ. ຈົ່ງເບິ່ງ ເຮົາຄື
[ກ]ຄວາມສະຫວ່າງ; ເຮົາໄດ້ເຮັດເປັນ [ຂ]ຕົວ
ຢ່າງໄວ້ໃຫ້ເຈົ້າແລ້ວ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ກັບສານຸ
ສິດຂອງພຣະອົງແລ້ວ, ພຣະອົງໄດ້ຫັນໄປ
ຫາຝູງຊົນອີກ ແລະ ກ່າວກັບພວກເຂົາວ່າ:
18 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ເຈົ້າຕ້ອງຄອຍເຝົ້າລະວັງ
ແລະ ອະທິຖານຢູ່ສະເໝີ ເພື່ອເຈົ້າຈະບໍ່ໄດ້
ເຂົ້າໄປຫາການລໍ້ລວງ; ເພາະວ່າ [ກ]ຊາຕານ
ປາດຖະໜາຢາກໄດ້ເຈົ້າ, ເພື່ອມັນຈະໄດ້
ຝັດຮ່ອນເຈົ້າເໝືອນດັ່ງຝັດເຂົ້າເປືອກ.
19 ສະນັ້ນ ເຈົ້າຕ້ອງອະທິຖານຫາພຣະ
ບິດາຢູ່ສະເໝີໃນນາມຂອງເຮົາ;
20 ແລະ [ກ]ສິ່ງໃດກໍຕາມທີ່ເຈົ້າຈະຂໍຈາກ
ພຣະບິດາໃນນາມຂອງເຮົາຊຶ່ງຖືກຕ້ອງ,
ໂດຍເຊື່ອວ່າເຈົ້າຈະໄດ້ຮັບ, ຈົ່ງເບິ່ງ ມັນຈະ
ຖືກມອບໃຫ້ແກ່ເຈົ້າ.
21 ຈົ່ງ [ກ]ອະທິຖານນຳຄອບຄົວຂອງເຈົ້າ
ຫາພຣະບິດາໃນນາມຂອງເຮົາສະເໝີ,
ເພື່ອເມຍຂອງເຈົ້າ ແລະ ລູກຂອງເຈົ້າຈະ
ໄດ້ຮັບພອນ.
22 ແລະ ຈົ່ງເບິ່ງ, ເຈົ້າຈົ່ງຊຸມນຸມກັນຢູ່
ເລື້ອຍໆ; ແລະ ເຈົ້າຢ່າໄດ້ຫ້າມຜູ້ທີ່ເຂົ້າມາ
ຫາເຈົ້າເວລາເຈົ້າກຳລັງຊຸມນຸມກັນຢູ່ນັ້ນ,
ແຕ່ປ່ອຍໃຫ້ເຂົາເຂົ້າມາຫາເຈົ້າ ແລະ ຢ່າ
ໄດ້ຫ້າມເຂົາ;
23 ແຕ່ ເຈົ້າ ຈົ່ງ [ກ]ອະ ທິ ຖານ ເພື່ອ ເຂົາ,
ແລະ ຢ່າໄດ້ຂັບໄລ່ເຂົາອອກໄປ; ແລະ ຖ້າ
ຫາກເປັນໄປວ່າ ເຂົາມາຫາເຈົ້າເປັນປະ
ຈຳ ຈົ່ງອະທິຖານຫາພຣະບິດາເພື່ອເຂົາໃນ
ນາມຂອງເຮົາ.
24 ສະນັ້ນ ຈົ່ງ ຍົກ [ກ]ຄວາມ ສະ ຫວ່າງ
ຂອງເຈົ້າຂຶ້ນເພື່ອມັນຈະສ່ອງແສງໄປທົ່ວ
ໂລກ. ຈົ່ງເບິ່ງ ເຮົາຄື [ຂ]ຄວາມສະຫວ່າງ
ຊຶ່ງເຈົ້າຈະຍົກຂຶ້ນ—ພ້ອມທັງສິ່ງທີ່ເຈົ້າໄດ້
ເຫັນເຮົາກະທຳໄປນັ້ນ. ຈົ່ງເບິ່ງ ເຈົ້າເຫັນ
ວ່າເຮົາໄດ້ອະທິຖານຫາພຣະບິດາ, ແລະ
ເຈົ້າທຸກຄົນໄດ້ເຫັນດ້ວຍຕາຂອງຕົນເອງ.
25 ແລະ ເຈົ້າເຫັນວ່າ ເຮົາບໍ່ໄດ້ສັ່ງໃຫ້
[ກ]ຜູ້ໃດໃນພວກເຈົ້າອອກໄປ, ແຕ່ໄດ້ສັ່ງໃຫ້
ເຈົ້າເຂົ້າມາຫາເຮົາ, ເພື່ອເຈົ້າຈະໄດ້ [ຂ]ສຳ
ພັດ ແລະ ເຫັນ; ເຖິງແມ່ນເຊັ່ນນັ້ນເຈົ້າຈົ່ງ
ປະຕິບັດຕໍ່ໂລກ; ແລະ ຜູ້ໃດກໍຕາມທີ່ຝ່າ
ຝືນບັນຍັດນີ້ ຜູ້ນັ້ນຈະຍອມໃຫ້ຕົນຖືກຊັກ
ນຳໄປຫາການລໍ້ລວງ.

---

13 ຂ 3 ນຟ 11:39.
15 ກ ແອວ 34:17–27.
ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
16 ກ ຄມພ ຄວາມສະຫວ່າງ, ຄວາມສະຫວ່າງ ຂອງພຣະຄຣິດ.
ຂ ຄມພ ພຣະເຢຊູຄຣິດ—ຕົວຢ່າງຂອງພຣະເຢຊູຄຣິດ.
18 ກ ລກ 22:31; 2 ນຟ 2:17–18; ຄພ 10:22–27.
20 ກ ມທ 21:22; ຮລມ 10:5; ມຣນ 7:26; ຄພ 88:63–65.
21 ກ ແອວ 34:21.
23 ກ 3 ນຟ 18:30.
24 ກ ມທ 5:16.
ຂ ມຊຢ 16:9.
25 ກ ແອວ 5:33.
ຂ 3 ນຟ 11:14–17.

26 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້
ແລ້ວ, ພຣະອົງໄດ້ທອດພຣະເນດໄປຫາ
ສານຸສິດທີ່ພຣະອົງເລືອກໄວ້ນັ້ນອີກ, ແລະ
ກ່າວກັບພວກເພິ່ນວ່າ:

27 ຈົ່ງເບິ່ງ ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ເຮົາຈະມອບບັນຍັດອີກຂໍ້
ໜຶ່ງໃຫ້ແກ່ເຈົ້າ, ແລະ ຫລັງຈາກນັ້ນເຮົາ
ຕ້ອງໄປເຝົ້າ [ກ]ພຣະບິດາຂອງເຮົາ ເພື່ອຈະ
ໄດ້ກະທຳໃຫ້ພຣະບັນຍັດຂໍ້ [ຂ]ອື່ນໆທີ່ພຣະ
ອົງໄດ້ປະທານໃຫ້ແກ່ເຮົາສຳເລັດ.

28 ແລະ ບັດນີ້ຈົ່ງເບິ່ງ, ນີ້ຄືບັນຍັດທີ່ເຮົາ
ຈະມອບໃຫ້ແກ່ເຈົ້າ, ຄືເວລາເຈົ້າປະຕິບັດ
ສາດສະໜາກິດນັ້ນ ຢ່າປ່ອຍໃຫ້ຜູ້ໃດ [ກ]ຮັບ
ສ່ວນເນື້ອໜັງ ແລະ ໂລຫິດຂອງເຮົາໂດຍ
[ຂ]ບໍ່ມີຄ່າຄວນ;

29 ເພາະວ່າຜູ້ໃດກໍຕາມທີ່ກິນເນື້ອໜັງ
ແລະ ດື່ມ [ກ]ໂລຫິດຂອງເຮົາໂດຍ [ຂ]ບໍ່ມີຄ່າ
ຄວນ ຜູ້ນັ້ນຍ່ອມກິນ ແລະ ດື່ມຄວາມອັບ
ປະໂຫຍດເຂົ້າໄປສູ່ດວງວິນຍານຂອງເຂົາ;
ສະນັ້ນ ຖ້າຫາກເຈົ້າຮູ້ວ່າຜູ້ໃດບໍ່ມີຄ່າຄວນ
ທີ່ຈະກິນເນື້ອໜັງ ແລະ ດື່ມໂລຫິດຂອງ
ເຮົາ ເຈົ້າຄວນຫ້າມເຂົາໄວ້.

30 ເຖິງຢ່າງໃດກໍຕາມ, ເຈົ້າຢ່າໄດ້ [ກ]ຂັບ
ໄລ່ເຂົາອອກຈາກບັນດາພວກເຈົ້າ, ແຕ່
ເຈົ້າຈົ່ງປະຕິບັດສາດສະໜາກິດແກ່ເຂົາ
ແລະ ຈົ່ງອະທິຖານຫາພຣະບິດາໃນນາມ
ຂອງເຮົາເພື່ອເຂົາ ແລະ ຖ້າຫາກເປັນໄປ
ວ່າ ເຂົາກັບໃຈ ແລະ ຮັບບັບຕິສະມາໃນ
ນາມຂອງເຮົາ, ເມື່ອນັ້ນເຈົ້າຈົ່ງຮັບເອົາເຂົາ
ໄວ້, ແລະ ຈົ່ງມອບເນື້ອໜັງ ແລະ ໂລຫິດ
ຂອງເຮົາໃຫ້ເຂົາ.

31 ແຕ່ຖ້າຫາກເຂົາບໍ່ກັບໃຈ ເຂົາຈະ
ບໍ່ຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຂອງເຮົາ,
ເພື່ອວ່າເຂົາຈະບໍ່ໄດ້ທຳລາຍຜູ້ຄົນຂອງ
ເຮົາ, ເພາະຈົ່ງເບິ່ງ ເຮົາຮູ້ຈັກແກະ [ກ]ຂອງ
ເຮົາ, ແລະ ພວກເຂົາຖືກນັບໄວ້ແລ້ວ.

32 ເຖິງຢ່າງໃດກໍຕາມ, ເຈົ້າຈະບໍ່ຂັບໄລ່
ເຂົາອອກ ຈາກທຳມະສາລາຂອງພວກ
ເຈົ້າ, ຫລື ຈາກສະຖານທີ່ນະມັດສະການ
ຂອງພວກເຈົ້າ, ແຕ່ຈົ່ງປະຕິບັດສາດສະ
ໜາກິດແກ່ຄົນນັ້ນສະເໝີໄປ ເພາະເຈົ້າບໍ່
ສາມາດຈະຮູ້ໄດ້ວ່າ ເຂົາອາດຈະກັບມາ
ແລະ ກັບໃຈຫລືບໍ່, ແລະ ມາຫາເຮົາດ້ວຍ
ຈຸດປະສົງເຕັມທີ່ແຫ່ງໃຈ, ແລະ ເຮົາຈະ
[ກ]ປິ່ນປົວເຂົາ; ແລະ ເຈົ້າຈະເປັນທາງນຳ
ຄວາມລອດມາສູ່ເຂົາ.

33 ສະນັ້ນ, ຈົ່ງຮັກສາຂໍ້ຄວາມເຫລົ່ານີ້
ຊຶ່ງເຮົາໄດ້ບັນຊາເຈົ້າ ເພື່ອເຈົ້າຈະບໍ່ໄດ້
ເຂົ້າຢູ່ພາຍໃຕ້ [ກ]ການກ່າວໂທດ; ເພາະ
ວິບັດແກ່ຜູ້ທີ່ຖືກພຣະບິດາກ່າວໂທດ.

34 ແລະ ເຮົາໄດ້ມອບບັນຍັດເຫລົ່ານີ້ໃຫ້
ແກ່ເຈົ້າຍ້ອນວ່າ ການໂຕ້ຖຽງກັນ ຊຶ່ງເຄີຍ
ມີມາກ່ອນໃນບັນດາພວກເຈົ້າ. ແລະ ເຈົ້າ
ຍ່ອມເປັນສຸກ ຖ້າຫາກເຈົ້າ [ກ]ບໍ່ມີການໂຕ້
ຖຽງກັນໃນບັນດາພວກເຈົ້າເອງ.

35 ແລະ ບັດນີ້ເຮົາຈະໄປເຝົ້າພຣະບິດາ,
ເພາະມັນສົມຄວນທີ່ເຮົາຈະໄປເຝົ້າພຣະ
ບິດາ [ກ]ເພື່ອເຈົ້າ.

36 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ

27 ກ ຄມພ ພຣະເຈົ້າ, ຝ່າຍ ພຣະເຈົ້າ—ພຣະເຈົ້າ ອົງເປັນພຣະບິດາ.
ຂ 3 ນຟ 16:1–3.
28 ກ 1 ກຣທ 11:27–30.
ຂ ມມ 9:29.
29 ກ ຄມພ ສິນລະລຶກ; ເລືອດ, ໂລຫິດ.
ຂ ຄພ 46:4.
30 ກ ຄພ 46:3.
31 ກ ຢຮ 10:14; ແອວ 5:38; 3 ນຟ 15:24.
32 ກ 3 ນຟ 9:13–14; ຄພ 112:13.
33 ກ ຄມພ ກ່າວໂທດ, ການກ່າວໂທດ.
34 ກ 3 ນຟ 11:28–30.
35 ກ 1 ຢຮ 2:1; 2 ນຟ 2:9; ມຣນ 7:27–28; ຄພ 29:5.

ພຣະເຢຊູຈົບຂໍ້ຄວາມເຫລົ່ານີ້ແລ້ວ, ພຣະ
ອົງໄດ້ເອົາ [ກ]ພຣະຫັດແຕະຕ້ອງ [ຂ]ສານຸສິດ
ແຕ່ລະຄົນຜູ້ທີ່ພຣະອົງເລືອກໄວ້ ຈົນໄດ້
ແຕະຕ້ອງທຸກຄົນ, ແລະ ກ່າວກັບພວກເພິ່ນ
ໃນຂະນະທີ່ແຕະຕ້ອງພວກເພິ່ນຢູ່ນັ້ນ.
37 ແລະ ຝູງຊົນບໍ່ໄດ້ຍິນພຣະຄຳທີ່ພຣະ
ອົງກ່າວ, ສະນັ້ນພວກເຂົາຈຶ່ງບໍ່ໄດ້ເປັນ
ພະຍານ; ແຕ່ສານຸສິດໄດ້ເປັນພະຍານວ່າ
ພຣະອົງໄດ້ປະທານ [ກ]ອຳນາດໃຫ້ພວກ
ເພິ່ນ ເພື່ອຈະໄດ້ມອບ [ຂ]ພຣະວິນຍານບໍລິ
ສຸດໃຫ້ແກ່ຄົນອື່ນໆ. ແລະ ຕໍ່ໄປນີ້ຂ້າພະ
ເຈົ້າຈະສະແດງໃຫ້ພວກທ່ານຮູ້ວ່າ ບັນທຶກ
ນີ້ເປັນຄວາມຈິງ.
38 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ແຕະຕ້ອງໝົດທຸກຄົນແລ້ວ,
ມັນໄດ້ມີ [ກ]ກ້ອນເມກມາປົກຄຸມຝູງຊົນໄວ້
ເຖິງຂະໜາດບໍ່ມີຜູ້ໃດສາມາດຫລຽວເຫັນ
ພຣະເຢຊູໄດ້.
39 ແລະ ໃນຂະນະທີ່ພວກເຂົາຖືກກ້ອນ
ເມກປົກຄຸມຢູ່ນັ້ນ ພຣະອົງໄດ້ຈາກພວກ
ເຂົາໄປ, ແລະ ໄດ້ສະເດັດຂຶ້ນສະຫວັນ.
ແລະ ພວກສານຸສິດໄດ້ເຫັນ ແລະ ໄດ້
ເປັນພະຍານວ່າ ພຣະອົງໄດ້ສະເດັດຂຶ້ນ
ສະຫວັນອີກເທື່ອໜຶ່ງ.

## ບົດທີ 19

*ສານຸສິດສິບສອງຄົນປະຕິບັດສາດສະໜາກິດແກ່ຝູງຊົນ ແລະ ອະທິຖານເພື່ອຮັບເອົາພຣະວິນຍານບໍລິສຸດ—ພວກເພິ່ນໄດ້ຮັບບັບຕິສະມາ ແລະ ຮັບເອົາພຣະວິນຍານບໍລິສຸດ ແລະ ໄດ້ຮັບການປະຕິບັດສາດສະໜາກິດຈາກເຫລົ່າທູດ—ພຣະເຢຊູອະທິຖານດ້ວຍຖ້ອຍຄຳທີ່ບໍ່ສາມາດຂຽນໄວ້ໄດ້—ພຣະອົງຢັ້ງຢືນເຖິງສັດທາອັນແຮງກ້າຂອງຊາວນີໄຟເຫລົ່ານີ້. ປະມານ ຄ.ສ. 34.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອພຣະເຢຊູໄດ້ສະເດັດຂຶ້ນສູ່ສະຫວັນ
ແລ້ວ, ຝູງຊົນກໍໄດ້ແຍກຍ້າຍກັນໄປ, ແລະ
ທຸກຄົນກໍໄດ້ພາເມຍຂອງຕົນ ແລະ ລູກ
ຂອງຕົນກັບໄປບ້ານເຮືອນຂອງໃຜລາວ.
2 ແລະ ມັນໄດ້ມີຂ່າວລືໂດຍທັນທີໄປ
ທົ່ວໃນບັນດາຜູ້ຄົນກ່ອນມັນຈະຄ່ຳມືດ, ວ່າ
ພຣະອົງໄດ້ປະຕິບັດສາດສະໜາກິດແກ່
ພວກເຂົາ, ແລະ ວ່າພຣະອົງຈະມາປະກົດ
ຕໍ່ຝູງຊົນອີກໃນມື້ອື່ນ.
3 ແທ້ຈິງແລ້ວ, ແລະ ຕະຫລອດທັງຄືນ
ມັນໄດ້ມີສຽງເວົ້າກັນໄປທົ່ວກ່ຽວກັບພຣະ
ເຢຊູ; ແລະ ພວກເຂົາໄດ້ສົ່ງຂ່າວໄປຍັງ
ຜູ້ຄົນຈົນວ່າຄົນຢ່າງຫລວງຫລາຍໄດ້ຮູ້
ຈັກ, ແທ້ຈິງແລ້ວ, ຄົນເປັນຈຳນວນຫລວງ
ຫລາຍໄດ້ທຳງານຢ່າງໜັກຕະຫລອດທັງ
ຄືນ, ເພື່ອວ່າໃນມື້ຕໍ່ມາ ພວກເຂົາຈະໄດ້ມີ
ໜ້າຢູ່ບ່ອນທີ່ພຣະເຢຊູຈະມາປະກົດຕົວຕໍ່
ຝູງຊົນອີກ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນມື້
ຕໍ່ມາ ຝູງຊົນກໍໄດ້ມາລວມກັນຢູ່ແລ້ວ, ຈົ່ງ
ເບິ່ງ, ນີໄຟ ແລະ ນ້ອງຊາຍຂອງເພິ່ນ ຜູ້ທີ່
ເພິ່ນໄດ້ໂຜດຍົກຂຶ້ນຈາກຕາຍ ຊື່ວ່າ ຕີໂມ
ທີ, ແລະ ລູກຊາຍຂອງເພິ່ນຊື່ວ່າໂຢນາ,
ແລະ ມາໂທໄນກັບນ້ອງຊາຍຂອງເພິ່ນຊື່
ວ່າ ມາໂທໄນຮາ, ແລະ ຄູເມັນ, ແລະ ຄູ
ເມັນອອນໄຮ, ແລະ ເຢເຣມີຢາ, ແລະ ເຊັມ
ນັນ, ແລະ ໂຢນາ, ແລະ ເຊເດກີຢາ, ແລະ

36 *ກ* ຄມພ ມື, ການວາງ.
*ຂ* 1 ນຟ 12:7; 3 ນຟ 19:4.
37 *ກ* ຄມພ ອຳນາດ.
*ຂ* ຄມພ ຂອງປະທານແຫ່ງ ພຣະວິນຍານບໍລິສຸດ.
38 *ກ* ອພຍ 19:9, 16.

ເອຊາຢາ—ທັງໝົດນີ້ຄືຊື່ຂອງ ສານຸສິດທີ່
ພຣະເຢຊູໄດ້ເລືອກໄວ້—ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ພວກເພິ່ນໄດ້ອອກໄປຢືນ
ຢູ່ເຄິ່ງກາງຝູງຊົນ.
5 ແລະ ຈົ່ງເບິ່ງ, ມັນມີຝູງຊົນຢ່າງຫລວງ
ຫລາຍ ຈົນວ່າພວກເພິ່ນຕ້ອງໄດ້ໃຫ້ພວກ
ເຂົາແຍກອອກເປັນສິບສອງກຸ່ມ.
6 ແລະ ສານຸສິດສິບສອງຄົນໄດ້ສິດສອນ
ຝູງຊົນ; ແລະ ຈົ່ງເບິ່ງ, ພວກເພິ່ນໄດ້ໃຫ້ຝູງ
ຊົນຄຸເຂົ່າລົງຢູ່ກັບພື້ນດິນ ແລະ ອະທິຖານ
ຫາພຣະບິດາໃນພຣະນາມຂອງພຣະເຢຊູ.
7 ແລະ ສານຸສິດກໍໄດ້ອະທິຖານຫາພຣະ
ບິດາໃນພຣະນາມຂອງພຣະເຢຊູຄືກັນ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເພິ່ນ
ໄດ້ລຸກຂຶ້ນ ແລະ ປະຕິບັດສາດສະໜາກິດ
ແກ່ຜູ້ຄົນ.
8 ແລະ ເມື່ອພວກເພິ່ນໄດ້ສິດສອນຂໍ້
ຄວາມດຽວກັນກັບທີ່ພຣະເຢຊູໄດ້ກ່າວ
ໂດຍບໍ່ຜິດຈາກພຣະຄຳທີ່ພຣະເຢຊູໄດ້
ກ່າວໄວ້ເລີຍ ຈົ່ງເບິ່ງ, ພວກເພິ່ນໄດ້ຄຸເຂົ່າ
ລົງ ແລະ ອະທິຖານຫາພຣະບິດາໃນພຣະ
ນາມຂອງພຣະເຢຊູ.
9 ແລະ ພວກເພິ່ນໄດ້ອະທິຖານຂໍສິ່ງທີ່
ພວກເພິ່ນປາດຖະໜາຫລາຍທີ່ສຸດ; ແລະ
ພວກເພິ່ນປາດຖະໜາຂໍໃຫ້ [ກ]ພຣະວິນ
ຍານບໍລິສຸດມາສະຖິດຢູ່ນຳພວກເພິ່ນ.
10 ແລະ ເມື່ອພວກເພິ່ນອະທິຖານແລ້ວ
ພວກເພິ່ນຈຶ່ງໄດ້ລົງໄປຍັງແຄມແມ່ນ້ຳ,
ແລະ ຝູງຊົນໄດ້ຕິດຕາມພວກເພິ່ນໄປ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ນີໄຟໄດ້ລົງໄປ [ກ]ໃນນ້ຳ ແລະ ຮັບບັບຕິ
ສະມາ.
12 ແລະ ເພິ່ນໄດ້ຂຶ້ນມາຈາກນ້ຳ ແລະ
ເລີ່ມໃຫ້ບັບຕິສະມາ. ແລະ ເພິ່ນໄດ້ໃຫ້
ບັບຕິສະມາທຸກຄົນທີ່ພຣະເຢຊູໄດ້ເລືອກ
ໄວ້.
13 ແລະ ເຫດການໄດ້ບັງເກີດຂຶ້ນເມື່ອ
ພວກເພິ່ນທຸກຄົນໄດ້ຮັບ [ກ]ບັບຕິສະມາ
ແລະ ຂຶ້ນມາຈາກນ້ຳແລ້ວ, [ຂ]ພຣະວິນຍານ
ບໍລິສຸດໄດ້ສະເດັດລົງມາເທິງພວກເພິ່ນ,
ແລະ ພວກເພິ່ນໄດ້ເຕັມໄປດ້ວຍພຣະວິນ
ຍານບໍລິສຸດ ແລະ ດ້ວຍໄຟ.
14 ແລະ ຈົ່ງເບິ່ງ, ຄືກັນກັບວ່າພວກເພິ່ນ
ຖືກ [ກ]ລ້ອມໄວ້ດ້ວຍໄຟ; ແລະ ມັນໄດ້ລົງ
ມາຈາກສະຫວັນ, ແລະ ຝູງຊົນໄດ້ເຫັນກັບ
ຕາຂອງຕົນເອງ, ແລະ ໄດ້ເປັນພະຍານ
ເຖິງເລື່ອງນີ້ ແລະ ເຫລົ່າທູດໄດ້ລົງມາຈາກ
ສະຫວັນ ແລະ ໄດ້ປະຕິບັດສາດສະໜາ
ກິດແກ່ພວກເພິ່ນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ເຫລົ່າທູດກຳລັງປະຕິບັດສາດສະ
ໜາກິດແກ່ສານຸສິດຢູ່ນັ້ນ, ຈົ່ງເບິ່ງ, ພຣະ
ເຢຊູໄດ້ສະເດັດລົງມາ ແລະ ປະທັບຢືນຢູ່
ເຄິ່ງກາງ ແລະ ປະຕິບັດສາດສະໜາກິດ
ແກ່ພວກເພິ່ນ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະອົງໄດ້ກ່າວກັບຝູງຊົນ, ແລະ ບັນຊາ
ໃຫ້ພວກເຂົາຄຸເຂົ່າລົງຢູ່ກັບພື້ນດິນອີກ,
ແລະ ບັນຊາໃຫ້ສານຸສິດຂອງພຣະອົງຄຸ
ເຂົ່າລົງຢູ່ກັບພື້ນດິນຄືກັນ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເມື່ອທຸກຄົນໄດ້ຄຸເຂົ່າລົງຢູ່ກັບພື້ນດິນແລ້ວ
ພຣະອົງໄດ້ບັນຊາໃຫ້ສານຸສິດຂອງພຣະ
ອົງອະທິຖານ.
18 ແລະ ຈົ່ງເບິ່ງ, ພວກເພິ່ນເລີ່ມອະທິ
ຖານ; ແລະ ພວກເພິ່ນໄດ້ອະທິຖານຫາ

**19** 9 *ກ* 3 ນຟ 9:20.
11 *ກ* 3 ນຟ 11:23.
13 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* 3 ນຟ 12:2; ມມ 7:10. ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
14 *ກ* ຮລມ 5:23–24, 43–45; 3 ນຟ 17:24.

ພຣະ ເຢຊູ, ເອີ້ນ ພຣະ ອົງ ວ່າ ພຣະ ຜູ້ ເປັນ
ເຈົ້າ ແລະ ພຣະເຈົ້າຂອງພວກເພິ່ນ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະເຢຊູໄດ້ສະເດັດອອກໄປຈາກວົງລ້ອມ
ຂອງພວກເພິ່ນ ແລະ ໄດ້ສະເດັດອອກໄປ
ຫ່າງຈາກພວກເພິ່ນເລັກໜ້ອຍ ແລະ ກົ້ມ
ຂາບ ລົງຢູ່ກັບ ພື້ນ ດິນ, ແລະ ພຣະອົງໄດ້
ກ່າວວ່າ:
20 ພຣະບິດາເອີຍ, ຂ້ານ້ອຍຂໍຂອບພຣະ
ໄທທີ່ພຣະອົງໄດ້ປະທານພຣະວິນຍານບໍລິ
ສຸດ ໃຫ້ ແກ່ຄົນເຫລົ່ານີ້ ຊຶ່ງຂ້ານ້ອຍເລືອກ
ໄວ້; ແລະ ເປັນຍ້ອນສັດທາຂອງພວກເຂົາ
ທີ່ມີໃນຂ້ານ້ອຍ, ຂ້ານ້ອຍຈຶ່ງໄດ້ເລືອກ
ພວກເຂົາຈາກໂລກ.
21 ພຣະບິດາເອີຍ, ຂ້ານ້ອຍຂໍວິງວອນຂໍ
ພຣະອົງປະທານພຣະວິນຍານບໍລິສຸດໃຫ້
ແກ່ທຸກຄົນທີ່ຈະເຊື່ອໃນຄຳເວົ້າຂອງພວກ
ເຂົາ.
22 ພຣະບິດາເອີຍ, ພຣະອົງໄດ້ປະທານ
ພຣະ ວິນ ຍານ ບໍ ລິ ສຸ ດ ໃຫ້ ແກ່ພວກ ເຂົາ
ເພາະ ພວກ ເຂົາເຊື່ອໃນ ຂ້ານ້ອຍ; ແລະ
ພຣະອົງເຫັນວ່າ ພວກເຂົາເຊື່ອໃນຂ້ານ້ອຍ
ກໍເພາະວ່າພຣະອົງໄດ້ຍິນພວກເຂົາ, ແລະ
ພວກ ເຂົາອະທິຖານຫາຂ້ານ້ອຍ; ແລະ
ພວກເຂົາອະທິຖານຫາຂ້ານ້ອຍເພາະຂ້າ
ນ້ອຍຢູ່ກັບພວກເຂົາ.
23 ແລະ ບັດນີ້ພຣະບິດາເອີຍ, ຂ້າ
ນ້ອຍ ອະທິຖານ ຫາ ພຣະ ອົງເພື່ອ ພວກ
ເຂົາ, ແລະ ເພື່ອທຸກຄົນທີ່ຈະເຊື່ອໃນຄຳ
ເວົ້າຂອງພວກເຂົາ, ເພື່ອພວກເຂົາຈະໄດ້
ເຊື່ອໃນຂ້ານ້ອຍ, ເພື່ອຂ້ານ້ອຍຈະໄດ້ຢູ່
ໃນພວກເຂົາ [ກ]ດັ່ງພຣະອົງຢູ່ໃນຂ້ານ້ອຍ,
ເພື່ອພວກເຮົາຈະໄດ້ເປັນ [ຂ]ໜຶ່ງ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ອະທິຖານຫາພຣະບິດາດັ່ງ
ນັ້ນແລ້ວ, ພຣະອົງໄດ້ສະເດັດໄປຫາສາ
ນຸສິດຂອງພຣະອົງ, ແລະ ຈົ່ງເບິ່ງ, ພວກ
ເພິ່ນຍັງອະທິຖານຫາພຣະອົງຢູ່ ໂດຍບໍ່
ຢຸດຢັ້ງ; ແລະ ພວກເພິ່ນບໍ່ໄດ້ [ກ]ເວົ້າຊ້ຳຄຳ
ເກົ່າ, ເພາະວ່າພວກເພິ່ນໄດ້ຮັບມາແລ້ວວ່າ
ພວກເພິ່ນຄວນ [ຂ]ອະທິຖານແບບໃດ, ແລະ
ພວກເພິ່ນກໍເຕັມໄປດ້ວຍຄວາມປາດຖະ
ໜາ.
25 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະ ເຢຊູໄດ້ປະທານພອນໃຫ້ແກ່ພວກ
ເພິ່ນ ໃນ ຂະນະ ທີ່ພວກເພິ່ນ ກຳລັງອະທິ
ຖານຫາພຣະອົງຢູ່ນັ້ນ, ແລະ ພຣະອົງໄດ້
ຍິ້ມໃສ່ພວກເພິ່ນ, ແລະ ຄວາມສະຫວ່າງ
ໃນ [ກ]ພຣະພັກຂອງພຣະອົງໄດ້ສ່ອງໃສ່
ພວກເພິ່ນ, ແລະ ຈົ່ງເບິ່ງ ພວກເພິ່ນ [ຂ]ຂາວ
ຄືກັນກັບ ພຣະພັກ ແລະ ອາພອນ ຂອງ
ພຣະເຢຊູ; ແລະ ຈົ່ງເບິ່ງ ຄວາມຂາວນັ້ນຍິ່ງ
ກວ່າຄວາມຂາວທັງປວງ, ແທ້ຈິງແລ້ວ, ບໍ່ມີ
ສິ່ງໃດໃນແຜ່ນດິນໂລກທີ່ຈະຂາວເທົ່າກັບ
ຄວາມຂາວນັ້ນ.
26 ແລະ ພຣະ ເຢຊູ ໄດ້ ກ່າວ ກັບ ພວກ
ເພິ່ນວ່າ: ຈົ່ງອະທິຖານຕໍ່ໄປເຖີດ; ແຕ່ເຖິງ
ປານນັ້ນພວກເພິ່ນກໍບໍ່ໄດ້ຢຸດອະທິຖານ
ເລີຍ.
27 ແລະ ພຣະອົງໄດ້ຫັນໄປຈາກພວກ
ເພິ່ນອີກ, ແລະ ໄດ້ສະເດັດອອກໄປຫ່າງ
ຈາກພວກເພິ່ນເລັກໜ້ອຍ; ແລະ ກົ້ມຂາບ
ລົງຢູ່ກັບພື້ນດິນ; ແລະ ພຣະອົງໄດ້ອະທິ
ຖານຫາພຣະບິດາອີກ, ມີຄວາມວ່າ:

23 ກ 3 ນຟ 9:15.
ຂ ຢຮ 17:21–23.
ຄມພ ເປັນອັນໜຶ່ງ
ດຽວກັນ, ຄວາມເປັນ
ອັນໜຶ່ງດຽວກັນ.
24 ກ ມທ 6:7.
ຂ ຄພ 46:30.
25 ກ ຈບຊ 6:23–27.
ຂ ຄມພ ການປ່ຽນ
ສະພາບ—ຜູ້ປ່ຽນ
ສະພາບແລ້ວ.

28 ພຣະບິດາເອີຍ, ຂ້ານ້ອຍຂໍຂອບພຣະໄທພຣະອົງທີ່ພຣະອົງກະທຳໃຫ້ຜູ້ຄົນທີ່ຂ້ານ້ອຍເລືອກໄວ້ [ກ]ບໍລິສຸດ, ເພາະສັດທາຂອງພວກເຂົາ, ແລະ ຂ້ານ້ອຍອະທິຖານເພື່ອພວກເຂົາ, ແລະ ເພື່ອທຸກຄົນທີ່ເຊື່ອຄຳຂອງພວກເຂົານຳອີກ, ເພື່ອພວກເຂົາຈະຖືກເຮັດໃຫ້ບໍລິສຸດໃນຂ້ານ້ອຍ, ໂດຍທາງສັດທາໃນຄຳຂອງພວກເຂົາ, ເຖິງຂະໜາດທີ່ພວກເຂົາບໍລິສຸດໃນຂ້ານ້ອຍ.

29 ພຣະບິດາເອີຍ, ຂ້ານ້ອຍບໍ່ໄດ້ອະທິຖານເພື່ອໂລກ, ແຕ່ເພື່ອຄົນເຫລົ່ານັ້ນທີ່ພຣະອົງໄດ້ປະທານໃຫ້ແກ່ຂ້ານ້ອຍ [ກ]ຈາກໂລກເພາະສັດທາຂອງພວກເຂົາ, ເພື່ອພວກເຂົາຈະຖືກເຮັດໃຫ້ບໍລິສຸດໃນຂ້ານ້ອຍ, ເພື່ອຂ້ານ້ອຍຈະໄດ້ຢູ່ໃນພວກເຂົາຄືກັນກັບພຣະບິດາຢູ່ໃນຂ້ານ້ອຍ, ເພື່ອພວກເຮົາຈະໄດ້ເປັນໜຶ່ງ, ພື່ອຂ້ານ້ອຍຈະໄດ້ຮັບບາລະມີໃນພວກເຂົາ.

30 ແລະ ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ແລ້ວ ພຣະອົງໄດ້ສະເດັດມາຫາສານຸສິດຂອງພຣະອົງອີກ; ແລະ ຈົ່ງເບິ່ງ ພວກເພິ່ນຍັງອະທິຖານຫາພຣະອົງຢູ່ຢ່າງຕັ້ງອົກຕັ້ງໃຈໂດຍບໍ່ຢຸດຢັ້ງ; ແລະ ພຣະອົງໄດ້ຍິ້ມໃສ່ພວກເພິ່ນອີກ; ແລະ ຈົ່ງເບິ່ງ ພວກເພິ່ນ [ກ]ຂາວເໝືອນດັ່ງພຣະເຢຊູ.

31 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະອົງໄດ້ສະເດັດອອກໄປຫ່າງຈາກພວກເພິ່ນເລັກໜ້ອຍອີກ ແລະ ໄດ້ອະທິຖານຫາພຣະບິດາ;

32 ແລະ ລີ້ນບໍ່ສາມາດກ່າວພຣະຄຳທີ່ພຣະອົງອະທິຖານນັ້ນໄດ້, ທັງມະນຸດບໍ່ສາມາດ [ກ]ຂຽນຂໍ້ຄວາມທີ່ພຣະອົງອະທິຖານນັ້ນໄດ້.

33 ແລະ ຝູງຊົນໄດ້ຍິນ ແລະ ໄດ້ເປັນພະຍານ; ແລະ ໃຈຂອງພວກເຂົາເປີດອອກ ແລະ ພວກເຂົາເຂົ້າໃຈສິ່ງທີ່ພຣະອົງໄດ້ອະທິຖານໃນໃຈຂອງພວກເຂົາ.

34 ເຖິງຢ່າງໃດກໍຕາມ, ພຣະຄຳຊຶ່ງພຣະອົງໄດ້ກ່າວອອກມານັ້ນຍິ່ງໃຫຍ່ ແລະ ໜ້າອັດສະຈັນຫລາຍຈົນຂຽນມັນໄວ້ບໍ່ໄດ້, ທັງມະນຸດຈະ [ກ]ເອີ່ຍບໍ່ໄດ້.

35 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູຈົບການອະທິຖານແລ້ວ, ແລະ ພຣະອົງໄດ້ສະເດັດມາຫາສານຸສິດອີກ, ແລະ ໄດ້ກ່າວກັບພວກເພິ່ນວ່າ: ເຮົາບໍ່ເຄີຍເຫັນ [ກ]ສັດທາອັນແຮງກ້າເຊັ່ນນີ້ໃນບັນດາຊາວຢິວເລີຍ; ດັ່ງນັ້ນເຮົາຈຶ່ງສະແດງສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນນີ້ກັບພວກເຂົາບໍ່ໄດ້, ເພາະຄວາມ [ຂ]ບໍ່ເຊື່ອຖືຂອງພວກເຂົາ.

36 ຕາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ, ບໍ່ມີຜູ້ໃດເລີຍໃນບັນດາຊາວຢິວທີ່ເຄີຍເຫັນສິ່ງອັນຍິ່ງໃຫຍ່ດັ່ງທີ່ເຈົ້າໄດ້ເຫັນມານີ້; ທັງພວກເຂົາບໍ່ເຄີຍໄດ້ຍິນເລື່ອງທີ່ຍິ່ງໃຫຍ່ເຊັ່ນນີ້ດັ່ງທີ່ເຈົ້າໄດ້ຍິນ.

## ບົດທີ 20

*ພຣະເຢຊູຈັດຫາເຂົ້າຈີ່ ແລະ ເຫລົ້າອະງຸ່ນຢ່າງໜ້າອັດສະຈັນ ແລະ ປະຕິບັດສິນລະລຶກແກ່ພວກເຂົາຕື່ມອີກ—ຜູ້ທີ່ເຫລືອຢູ່ຂອງຢາໂຄບຈະຮຽນຮູ້ເລື່ອງພຣະຜູ້ເປັນ*

28 *ກ* ມຣນ 7:48; ຄພ 50:28–29; 88:74–75. ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
29 *ກ* ຢຮ 17:6.
30 *ກ* ມທ 17:2.
32 *ກ* ຄພ 76:116.
34 *ກ* 2 ກຣທ 12:4; 3 ນຟ 17:17.
35 *ກ* ຄມພ ສັດທາ.
*ຂ* ມທ 13:58. ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.

*ເຈົ້າອົງເປັນພຣະເຈົ້າຂອງພວກເຂົາ ແລະ ຈະ ໄດ້ເປັນ ເຈົ້າຂອງອາເມ ຣິກາ—ພຣະ ເຢຊູເປັນສາດສະດາຄືກັນກັບ ໂມເຊ, ແລະ ຊາວ ນີໄຟແມ່ນລູກຫລານ ຂອງ ສາດ ສະ ດາ—ຜູ້ຄົນຂອງພຣະຜູ້ເປັນເຈົ້າກຸ່ມອື່ນໆ ຈະ ໄປ ເຕົ້າ ໂຮມກັນທີ່ເຢຣູຊາເລັມ. ປະ ມານ ຄ.ສ. 34.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ອົງ ໄດ້ ບັນ ຊາ ໃຫ້ຝູງຊົນ ເຊົາ ອະທິຖານ,
ແລະ ສານຸສິດຂອງພຣະອົງກໍຄືກັນ. ແລະ
ພຣະອົງໄດ້ບັນຊາພວກເຂົາວ່າ ພວກເຂົາ
ບໍ່ຄວນເຊົາ [ກ]ອະທິຖານຢູ່ໃນໃຈຂອງພວກ
ເຂົາ.
2 ແລະ ພຣະອົງໄດ້ບັນຊາໃຫ້ພວກເຂົາ
ລຸກ ຢືນຂຶ້ນ. ແລະ ພວກເຂົາກໍໄດ້ລຸກຢືນ
ຂຶ້ນ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ອົງ ໄດ້ຫັກເຂົ້າຈີ່ອີກເທື່ອ ໜຶ່ງ ແລະ ໃຫ້
ພອນແກ່ມັນ, ແລະ ເອົາໃຫ້ສານຸສິດກິນ.
4 ແລະ ເມື່ອພວກເພິ່ນໄດ້ກິນແລ້ວ ພຣະ
ອົງໄດ້ບັນຊາໃຫ້ພວກເພິ່ນຫັກເຂົ້າຈີ່, ແລະ
ເອົາໃຫ້ຝູງຊົນກິນ.
5 ແລະ ເມື່ອພວກເພິ່ນໄດ້ເອົາໃຫ້ຝູງຊົນ
ແລ້ວ ພຣະອົງເອົາເຫລົ້າອະງຸ່ນໃຫ້ພວກ
ເພິ່ນດື່ມນຳອີກ, ແລະ ບັນຊາໃຫ້ພວກເພິ່ນ
ເອົາໃຫ້ຝູງຊົນດື່ມ.
6 ບັດນີ້, ທັງສານຸສິດ ແລະ ຝູງຊົນບໍ່ໄດ້
ເອົາ [ກ]ເຂົ້າຈີ່ ແລະ ເຫລົ້າອະງຸ່ນມາໃຫ້ພຣະ
ອົງ;
7 ແຕ່ພຣະອົງໄດ້ [ກ]ເອົາເຂົ້າຈີ່ໃຫ້ແກ່ຄົນ
ເຫລົ່ານັ້ນກິນ, ແລະ ໄດ້ເອົາເຫລົ້າອະງຸ່ນ
ໃຫ້ແກ່ຄົນເຫລົ່ານັ້ນດື່ມອີກ.
8 ແລະ ພຣະອົງ ໄດ້ກ່າວກັບພວກເຂົາ
ວ່າ: ຄົນໃດທີ່ໄດ້ [ກ]ກິນເຂົ້າຈີ່ຈາກປັ້ງນີ້ກໍ
ເທົ່າກັບວ່າ ເຂົາໄດ້ກິນເນື້ອກາຍຂອງເຮົາ
ເຂົ້າໄປສູ່ຈິດວິນຍານຂອງເຂົາ; ແລະ ຄົນ
ໃດທີ່ໄດ້ດື່ມເຫລົ້າອະງຸ່ນຈາກຈອກນີ້ ກໍ
ເທົ່າກັບວ່າເຂົາໄດ້ດື່ມເລືອດຂອງເຮົາເຂົ້າ
ໄປສູ່ຈິດວິນຍານຂອງເຂົາ; ແລະ ຈິດວິນ
ຍານຂອງເຂົາຈະບໍ່ຫິວ ຫລື ກະຫາຍ, ແຕ່
ຈະອີ່ມ.
9 ບັດນີ້, ເມື່ອຝູງຊົນໄດ້ກິນ ແລະ ດື່ມກັນ
ໝົດທຸກຄົນແລ້ວ, ຈົ່ງເບິ່ງ, ພວກເຂົາເຕັມ
ໄປດ້ວຍພຣະວິນຍານ; ແລະ ພວກເຂົາ
ໄດ້ຮ້ອງອອກມາເປັນສຽງດຽວກັນ ແລະ
ຖວາຍບາລະມີແດ່ພຣະເຢຊູ ຜູ້ທີ່ພວກເຂົາ
ທັງໄດ້ເຫັນ ແລະ ໄດ້ຍິນສຽງ.
10 ແລະ ເຫດການໄດ້ບັງກິດຂຶ້ນຄື ເມື່ອ
ພວກເຂົາທຸກຄົນໄດ້ຖວາຍບາລະມີແດ່
ພຣະເຢຊູແລ້ວ, ພຣະອົງໄດ້ກ່າວກັບພວກ
ເຂົາວ່າ: ຈົ່ງເບິ່ງ ບັດນີ້ເຮົາໄດ້ເຮັດໃຫ້ພຣະ
ບັນຍັດຊຶ່ງພຣະບິດາບັນຊາເຮົາກ່ຽວກັບ
ຜູ້ຄົນພວກນີ້ສຳເລັດແລ້ວ, ຜູ້ຊຶ່ງເປັນຜູ້ທີ່
ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນ.
11 ເຈົ້າຄົງຈຳໄດ້ວ່າ ເຮົາໄດ້ກ່າວກັບເຈົ້າ,
ແລະ ເວົ້າວ່າເມື່ອ [ກ]ຄຳຂອງ [ຂ]ເອຊາຍາຈະ
ສຳເລັດ—ຈົ່ງເບິ່ງ ມັນມີຂຽນໄວ້, ເຈົ້າມີມັນ
ຢູ່ຕໍ່ໜ້າເຈົ້າ, ສະນັ້ນ ຈົ່ງຄົ້ນຄວ້າມັນ—
12 ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ວ່າເມື່ອມັນສຳເລັດ ເວລາ
ນັ້ນ [ກ]ພັນທະສັນຍາຊຶ່ງພຣະບິດາໄດ້ເຮັດ
ໄວ້ກັບຜູ້ຄົນຂອງພຣະອົງກໍຈະສຳເລັດ, ໂອ້
ເຊື້ອສາຍອິດສະຣາເອນ.

**20** 1 *ກ* 2 ນຟ 32:9; ມຊຢ 24:12.
6 *ກ* ມທ 14:19–21.
7 *ກ* ຢຮ 6:9–14.
8 *ກ* ຢຮ 6:50–58; 3 ນຟ 18:7. ຄນພ ສິນລະລຶກ.
11 *ກ* 3 ນຟ 16:17–20; 23:1–3.
*ຂ* 2 ນຟ 25:1–5; ມມ 8:23.
12 *ກ* 3 ນຟ 15:7–8.

13 ແລະ ເມື່ອນັ້ນ [ກ]ຜູ້ທີ່ເຫລືອຢູ່, ຊຶ່ງໄດ້ແຕກ [ຂ]ກະຈັດກະຈາຍໄປທົ່ວພື້ນແຜ່ນດິນໂລກຈະ [ຄ]ເຕົ້າໂຮມຈາກທາງຕາເວັນອອກ ແລະ ຈາກທາງຕາເວັນຕົກ, ແລະ ຈາກທາງໃຕ້ ແລະ ຈາກທາງເໜືອ; ແລະ ພວກເຂົາຈະຖືກນຳມາສູ່ [ງ]ຄວາມຮູ້ເລື່ອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ ຜູ້ໄດ້ໄຖ່ພວກເຂົາ.

14 ແລະ ພຣະບິດາໄດ້ບັນຊາເຮົາວ່າເຮົາຄວນມອບ [ກ]ແຜ່ນດິນນີ້ໃຫ້ເຈົ້າເພື່ອເປັນມູນມໍລະດົກ.

15 ແລະ ເຮົາກ່າວກັບເຈົ້າ, ວ່າຖ້າຫາກຄົນຕ່າງຊາດບໍ່ [ກ]ກັບໃຈຫລັງຈາກທີ່ພວກເຂົາໄດ້ຮັບພອນແລ້ວ, ຫລັງຈາກພວກເຂົາໄດ້ເຮັດໃຫ້ຜູ້ຄົນຂອງເຮົາກະຈັດກະຈາຍໄປ—

16 ເມື່ອນັ້ນ ເຈົ້າ, ຜູ້ເປັນຜູ້ທີ່ເຫລືອຢູ່ຂອງເຊື້ອສາຍຂອງຢາໂຄບຈະອອກໄປໃນບັນດາພວກເຂົາ; ແລະ ເຈົ້າຈະຢູ່ໃນທ່າມກາງຂອງພວກເຂົາທີ່ມີຈຳນວນຢ່າງຫລວງຫລາຍ; ແລະ ເຈົ້າຈະຢູ່ໃນບັນດາພວກເຂົາເໝືອນດັ່ງສິງຢູ່ໃນບັນດາສັດໃນປ່າ, ແລະ ດັ່ງ [ກ]ສິງໜຸ່ມຢູ່ໃນບັນດາຝູງແກະ ຊຶ່ງຖ້າຫາກມັນຜ່ານໄປ ທັງຈະ [ຂ]ຢຽບຍ່ຳ ແລະ ຈີກເປັນຕ່ອນໆ, ແລະ ບໍ່ມີໃຜປົດປ່ອຍໄດ້.

17 ມືຂອງເຈົ້າຈະຍົກຢູ່ເທິງຜູ້ປໍລະປັກຂອງເຈົ້າ, ແລະ ສັດຕູຂອງເຈົ້າຈະຖືກຕັດອອກໄປທັງໝົດ.

18 ແລະ ເຮົາຈະ [ກ]ເຕົ້າໂຮມຜູ້ຄົນຂອງເຮົາເຂົ້າກັນດັ່ງຄົນເຕົ້າໂຮມມັດເຂົ້າໄວ້ໃນລານ.

19 ເພາະ ເຮົາ ຈະ ເຮັດ ໃຫ້ ຜູ້ ຄົນ ຂອງເຮົາຜູ້ທີ່ພຣະບິດາໃຫ້ພັນທະສັນຍາ, ແທ້ຈິງແລ້ວ, ເຮົາຈະເຮັດໃຫ້ [ກ]ເຂົາຂອງເຈົ້າເປັນເຫລັກ, ແລະ ເຮົາຈະເຮັດໃຫ້ກີບຕີນຂອງເຈົ້າເປັນທອງເຫລືອງ. ແລະ ເຈົ້າຈະໄດ້ທຸບຕີຄົນຢ່າງຫລວງຫລາຍເປັນຕ່ອນໆ; ແລະ ເຮົາຈະອຸທິດຜົນປະໂຫຍດຂອງພວກເຂົາແດ່ພຣະຜູ້ເປັນເຈົ້າ ແລະ ເຂົ້າຂອງ ຂອງພວກເຂົາຖວາຍພຣະຜູ້ເປັນເຈົ້າຂອງທັງແຜ່ນດິນໂລກ. ແລະ ຈົ່ງເບິ່ງ, ເຮົາຄືຜູ້ທີ່ຈະກະທຳສິ່ງນີ້.

20 ແລະ ເຫດການຈະບັງເກີດຂຶ້ນ, ພຣະບິດາໄດ້ກ່າວ, ວ່າ [ກ]ດາບແຫ່ງຄວາມຍຸດຕິທຳຂອງເຮົາຈະແຂວນຢູ່ເທິງຫົວຂອງພວກເຂົາໃນມື້ນັ້ນ, ແລະ ຖ້າຫາກພວກເຂົາບໍ່ກັບໃຈ ມັນຈະຟາດຟັນລົງໃສ່ພວກເຂົາ, ພຣະບິດາໄດ້ກ່າວ, ແທ້ຈິງແລ້ວ, ແມ່ນແຕ່ຢູ່ເທິງຫົວຂອງທຸກປະຊາຊາດຂອງຄົນຕ່າງຊາດ.

21 ແລະ ເຫດການຈະບັງເກີດຂຶ້ນຄື ເຮົາຈະສະຖາປະນາ [ກ]ຄົນຂອງເຮົາຂຶ້ນ, ໂອ້ ເຊື້ອສາຍອິດສະຣາເອນ.

22 ແລະ ຈົ່ງເບິ່ງ, ເຮົາຈະສະຖາປະນາຜູ້ຄົນພວກນີ້ຂຶ້ນໃນແຜ່ນດິນນີ້, ເພື່ອໃຫ້ [ກ]ພັນທະສັນຍາຊຶ່ງເຮົາໄດ້ເຮັດໄວ້ກັບຢາໂຄບບັນພະບຸດລຸດຂອງເຈົ້າສຳເລັດ; ແລະ ມັນຈະເປັນ [ຂ]ເຢຣູຊາເລັມໃໝ່. ແລະ

---

13 ກ 3 ນຟ 16:11–12; 21:2–7.
ຂ ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ.
ຄ ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
ງ 3 ນຟ 16:4–5.
14 ກ ຄມພ ແຜ່ນດິນແຫ່ງຄຳສັນຍາ.
15 ກ 3 ນຟ 16:10–14.
16 ກ ມມ 5:24; ຄພ 19:27.
ຂ ມກ 5:8–9; 3 ນຟ 16:14–15; 21:12.
18 ກ ມກ 4:12.
19 ກ ມກ 4:13.
20 ກ 3 ນຟ 29:4.
21 ກ 3 ນຟ 16:8–15.
22 ກ ປຖກ 49:22–26; ຄພ 57:2–3.
ຂ ອຊຢ 2:2–5; 3 ນຟ 21:23–24; ອທ 13:1–12; ຄພ 84:2–4. ຄມພ ເຢຣູຊາເລັມໃໝ່.

ອຳນາດຂອງສະຫວັນຈະມາຢູ່ທ່າມກາງຜູ້
ຄົນພວກນີ້; ແທ້ຈິງແລ້ວ, ແມ່ນແຕ່ [ຄ]ເຮົາ
ຈະຢູ່ໃນທ່າມກາງພວກເຈົ້າ.
23 ຈົ່ງເບິ່ງ, ເຮົາຄືຜູ້ທີ່ໂມເຊເວົ້າເຖິງ, ມີ
ຄວາມວ່າ: ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງເຈົ້າຈະຍົກ [ກ]ສາດສະດາຜູ້ໜຶ່ງຂຶ້ນ
ຈາກພີ່ນ້ອງຂອງເຈົ້າໃຫ້ແກ່ເຈົ້າ ທີ່ເໝືອນ
ກັບຂ້າພະເຈົ້າ; ເຈົ້າຈົ່ງຟັງຜູ້ນັ້ນໃນທຸກ
ເລື່ອງບໍ່ວ່າຈະເປັນອັນໃດກໍຕາມທີ່ຜູ້ນັ້ນ
ຈະກ່າວກັບເຈົ້າ. ແລະ ເຫດການຈະບັງ
ເກີດຂຶ້ນຄື ຜູ້ໃດກໍຕາມທີ່ບໍ່ຟັງຖ້ອຍຄຳຂອງ
ສາດສະດາ ຜູ້ນັ້ນຈະຖືກຕັດອອກຈາກບັນ
ດາຜູ້ຄົນ.
24 ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ,
ແລະ ສາດສະດາ [ກ]ທັງໝົດນັບຕັ້ງແຕ່ຊາມູ
ເອນ ແລະ ຄົນອື່ນໆຕໍ່ຈາກນັ້ນມາຫລາຍຕໍ່
ຫລາຍຄົນກໍໄດ້ເວົ້າ ແລະ ໃຫ້ຖ້ອຍຄຳເຖິງ
ເຮົາ.
25 ແລະ ຈົ່ງເບິ່ງ, ເຈົ້າເປັນລູກຫລານ
ຂອງສາດສະດາ; ແລະ ເຈົ້າເປັນເຊື້ອສາຍ
ອິດສະຣາເອນ; ແລະ ເຈົ້າຢູ່ໃນ [ກ]ພັນທະ
ສັນຍາ ຊຶ່ງພຣະບິດາໄດ້ເຮັດໄວ້ກັບບັນພະ
ບຸລຸດຂອງເຈົ້າ, ເມື່ອພຣະອົງກ່າວກັບອັບ
ຣາຮາມວ່າ: ແລະ [ຂ]ໃນລູກຫລານຂອງເຈົ້າ
ທຸກຕະກຸນຂອງແຜ່ນດິນໂລກຈະໄດ້ຮັບ
ພອນ.
26 ພຣະບິດາຍົກເຮົາໃຫ້ກັບເຈົ້າກ່ອນ,
ແລະ ສົ່ງເຮົາມາໃຫ້ພອນແກ່ເຈົ້າໃນການ
ເຮັດໃຫ້ເຈົ້າທຸກຄົນ [ກ]ຫັນໜີຈາກຄວາມຊົ່ວ
ຮ້າຍຂອງເຈົ້າ; ແລະ ນີ້ກໍເພາະວ່າເຈົ້າເປັນ
ລູກຫລານແຫ່ງພັນທະສັນຍາ—
27 ແລະ ຫລັງຈາກທີ່ເຈົ້າໄດ້ຮັບພອນ
ແລ້ວ ເມື່ອນັ້ນພຣະບິດາຈະໃຫ້ພັນທະສັນ
ຍາຊຶ່ງພຣະອົງໄດ້ກະທຳໄວ້ກັບອັບຣາຮາມ
ສຳເລັດ, ມີຄວາມວ່າ: [ກ]ໃນລູກຫລານຂອງ
ເຈົ້າ ທຸກຕະກຸນຂອງແຜ່ນດິນໂລກຈະໄດ້
ຮັບພອນ—ເພື່ອການເທພຣະວິນຍານບໍ
ລິສຸດລົງມາເທິງຄົນຕ່າງຊາດໂດຍທາງ
ເຮົາ, ຊຶ່ງພອນທີ່ມີຢູ່ກັບ [ຂ]ຄົນຕ່າງຊາດນັ້ນ
ຈະເຮັດໃຫ້ພວກເຂົາຍິ່ງໃຫຍ່ເໜືອຄົນທັງ
ປວງ, ຈົນເຮັດໃຫ້ຜູ້ຄົນຂອງເຮົາກະຈັດກະ
ຈາຍໄປ, ໂອ້ ເຊື້ອສາຍອິດສະຣາເອນ.
28 ແລະ ພວກເຂົາຈະເປັນ [ກ]ໄພພິບັດ
ຕໍ່ຜູ້ຄົນຂອງແຜ່ນດິນນີ້. ແຕ່ເຖິງຢ່າງໃດກໍ
ຕາມ, ເມື່ອພວກເຂົາໄດ້ຮັບຄວາມສົມບູນ
ແຫ່ງພຣະກິດຕິຄຸນຂອງເຮົາແລ້ວ, ເມື່ອນັ້ນ
ຖ້າຫາກພວກເຂົາຍັງເຮັດໃຈແຂງກະດ້າງ
ກັບເຮົາຢູ່, ເຮົາຈະສົ່ງຄວາມຊົ່ວຮ້າຍຂອງ
ພວກເຂົາກັບຄືນໃສ່ຫົວຂອງພວກເຂົາ,
ພຣະບິດາໄດ້ກ່າວ.
29 ແລະ ເຮົາຈະ [ກ]ນຶກເຖິງພັນທະສັນ
ຍາຊຶ່ງເຮົາໄດ້ກະທຳໄວ້ກັບຜູ້ຄົນຂອງເຮົາ;
ແລະ ເຮົາໄດ້ໃຫ້ພັນທະສັນຍາກັບພວກ
ເຂົາວ່າ ເຮົາຈະ [ຂ]ເຕົ້າໂຮມພວກເຂົາໃນ
ເວລາອັນເໝາະສົມຂອງເຮົາ, ວ່າເຮົາຈະ
ມອບ [ຄ]ແຜ່ນດິນຂອງບັນພະບຸລຸດຂອງ
ພວກເຂົາໃຫ້ແກ່ພວກເຂົາຄືນຄືເກົ່າເປັນ
ມູນມໍລະດົກ ຄືແຜ່ນດິນ [ງ]ເຢຣູຊາເລັມ, ຊຶ່ງ

22 ຄ ອຊຢ 59:20–21; ມລກ 3:1; 3 ນຟ 24:1.
23 ກ ພບຍ 18:15–19; ກຈກ 3:22–23; 1 ນຟ 22:20–21.
24 ກ ກຈກ 3:24–26; 1 ນຟ 10:5; ຢຄ 7:11.
25 ກ ຄມພ ພັນທະສັນຍາ ຂອງອັບຣາຮາມ.
ຂ ປຖກ 12:1–3; 22:18.
26 ກ ສພສ 16:6.
27 ກ ຄລຕ 3:8; 2 ນຟ 29:14; ອຣຣ 2:9.
ຂ 3 ນຟ 16:6–7.
28 ກ 3 ນຟ 16:8–9.
29 ກ ອຊຢ 44:21; 3 ນຟ 16:11–12.
ຂ ຄມພ ອິດສະຣາເອນ— ການເຕົ້າໂຮມຊາວ ອິດສະຣາເອນ.
ຄ ອມ 9:14–15.
ງ ຄມພ ເຢຣູຊາເລັມ.

ເປັນ ແຜ່ນ ດິນ ແຫ່ງ ຄຳ ສັນ ຍາ ຂອງ ພວກ ເຂົາຕະຫລອດໄປ, ພຣະບິດາໄດ້ກ່າວ.

30 ແລະ ເຫດການຈະບັງເກີດຂຶ້ນຄື ວັນເວລາຈະມາເຖິງ, ເມື່ອຄວາມສົມບູນແຫ່ງພຣະກິດຕິຄຸນຂອງເຮົາຈະໄດ້ຖືກສັ່ງສອນໃຫ້ແກ່ພວກເຂົາ;

31 ແລະ ພວກເຂົາຈະ [ກ]ເຊື່ອໃນເຮົາ, ວ່າເຮົາຄືພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ, ແລະ ຈະອະທິຖານຫາພຣະບິດາໃນນາມຂອງເຮົາ.

32 ເມື່ອ ນັ້ນ [ກ]ຄົນ ຍາມ ກໍ ຈະ ເປັ່ງ ສຽງ, ແລະ ພວກເຂົາຈະເປັ່ງສຽງໂຮຮ້ອງນຳກັນ; ເພາະວ່າພວກເຂົາຈະເຫັນດ້ວຍຕາ.

33 ເມື່ອ ນັ້ນ ພຣະບິດາຈະເຕົ້າໂຮມພວກເຂົາເຂົ້າກັນອີກ, ແລະ ປະທານເຢຣູຊາເລັມໃຫ້ພວກເຂົາ ເພື່ອເປັນແຜ່ນດິນມູນມໍລະດົກຂອງພວກເຂົາ.

34 ເມື່ອນັ້ນພວກເຂົາຈະເປັ່ງສຽງດ້ວຍຄວາມ ຊື່ນ ຊົມ—[ກ]ຮ້ອງ ເພງນຳກັນ, ກຸງເຢຣູຊາເລັມເອີຍ ເຈົ້າຜູ້ທີ່ເປັນເມືອງຮົກຮ້າງ; ເພາະພຣະບິດາໄດ້ອອຍໃຈຜູ້ຄົນຂອງພຣະອົງແລ້ວ, ພຣະອົງໄດ້ໄຖ່ກຸງເຢຣູຊາເລັມແລ້ວ.

35 ພຣະບິດາໄດ້ກາງແຂນອັນສັກສິດຂອງພຣະອົງໃນສາຍຕາຂອງປະຊາຊາດທັງປວງ; ແລະ ທົ່ວທີ່ສຸດຂອງແຜ່ນດິນໂລກຈະເຫັນການຊ່ວຍໃຫ້ລອດຂອງພຣະບິດາ; ແລະ ພຣະບິດາກັບເຮົາເປັນໜຶ່ງ.

36 ແລະ ເມື່ອນັ້ນເລື່ອງທີ່ມີຂຽນໄວ້ຈະບັງເກີດຂຶ້ນ: ຈົ່ງ [ກ]ຕື່ນເຖີດ, ຈົ່ງຕື່ນຂຶ້ນອີກ, ແລະ ຈົ່ງມີຄວາມເຂັ້ມແຂງ, ໂອ້ ຊີໂອນ; ຈົ່ງນຸ່ງຫົ່ມເສື້ອຜ້າອັນສວຍງາມເຖີດ, ໂອ້ ເຢຣູຊາເລັມນະຄອນສັກສິດເອີຍ, ເພາະວ່ານັບແຕ່ນີ້ຕໍ່ໄປຈະບໍ່ມີຜູ້ໃດທີ່ສົກກະປົກ ແລະ ບໍ່ສະອາດເຂົ້າມາຫາເຈົ້າອີກຕໍ່ໄປ.

37 ຈົ່ງລຸກຂຶ້ນຈາກຝຸ່ນດິນ; ຈົ່ງລຸກຂຶ້ນ, ນັ່ງລົງ, ໂອ້ ເຢຣູຊາເລັມ; ຈົ່ງປົດຕົວອອກຈາກປອກຄໍ, ໂອ້ ທິດາຜູ້ຖືກຈ່ອງຈຳຂອງຊີໂອນ.

38 ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ເຈົ້າໄດ້ຂາຍຕົວໄປລ້າໆ, ແລະ ເຈົ້າຈະຖືກໄຖ່ໂດຍບໍ່ຕ້ອງເສຍເງິນ.

39 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ວ່າຜູ້ຄົນຂອງເຮົາຈະຮູ້ຈັກຊື່ເຮົາ; ແທ້ຈິງແລ້ວ, ໃນມື້ນັ້ນພວກເຂົາຈະຮູ້ວ່າ ເຮົາຄືຄົນທີ່ເວົ້າ.

40 ແລະ ເມື່ອນັ້ນພວກເຂົາຈະເວົ້າວ່າ: ຕີນຂອງຜູ້ທີ່ຢູ່ເທິງພູນັ້ນງາມ [ກ]ພຽງໃດ ຜູ້ທີ່ໄດ້ນຳເອົາຂ່າວປະເສີດມາ; ທີ່ໄດ້ [ຂ]ປະກາດສັນຕິສຸກ; ທີ່ນຳເອົາຂ່າວປະເສີດຂອງຄວາມດີມາ, ທີ່ປະກາດຄວາມລອດ; ທີ່ກ່າວກັບຊີໂອນວ່າ: ພຣະເຈົ້າຂອງເຈົ້າຊົງປົກຄອງ;

41 ແລະ ເມື່ອນັ້ນຈະມີສຽງຮ້ອງ [ກ]ອອກໄປວ່າ: ເຈົ້າຈົ່ງອອກໄປ, ເຈົ້າຈົ່ງອອກໄປ, ເຈົ້າຈົ່ງອອກໄປຈາກບ່ອນນັ້ນ, ຢ່າແຕະຕ້ອງສິ່ງທີ່ [ຂ]ບໍ່ສະອາດ; ຈົ່ງອອກໄປຈາກທ່າມກາງຂອງມັນ; ເຈົ້າທີ່ຖືພາຊະນະຂອງພຣະຜູ້ເປັນເຈົ້າຈົ່ງຮັກສາຕົວ [ຄ]ໃຫ້ສະອາດ.

42 ເພາະເຈົ້າ [ກ]ບໍ່ຕ້ອງຟ້າວອອກໄປ ຫລື

31 ກ 3 ນຟ 5:21–26; 21:26–29.
32 ກ ອຊຢ 52:8; 3 ນຟ 16:18–20. ຄມພ ຍາມ, ຄົນຍາມ.
34 ກ ອຊຢ 52:9.
36 ກ ອຊຢ 52:1–3; ຄພ 113:7–10. ຄມພ ຊີໂອນ.
40 ກ ອຊຢ 52:7; ນຮ 1:15; ມຊຢ 15:13–18; ຄພ 128:19.
ຂ ມຣກ 13:10; 1 ນຟ 13:37.
41 ກ ອຊຢ 52:11–15.
ຂ ຄມພ ສະອາດ ແລະ ບໍ່ສະອາດ.
ຄ ຄພ 133:5.
42 ກ 3 ນຟ 21:29.

ບໍ່ຕ້ອງຫລົບໜີໄປ; ເພາະພຣະຜູ້ເປັນເຈົ້າ
ຈະນຳໜ້າເຈົ້າໄປ, ແລະ ພຣະເຈົ້າ ຂອງ
ອິດສະຣາເອນຈະຮັກສາທາງຫລັງຂອງ
ເຈົ້າ.
43 ຈົ່ງເບິ່ງ, ຂ້າໃຊ້ຂອງເຮົາຈະເຮັດພາ
ລະກິດຂອງຕົນຢ່າງຮອບຄອບ; ລາວຈະ
ເປັນຜູ້ຍິ່ງໃຫຍ່ ແລະ ມີກຽດອັນສູງສົ່ງ.
44 ດັ່ງທີ່ຫລາຍ ຕໍ່ ຫລາຍຄົນ ແປກ ໃຈ
ໃນ ຕົວ ເຈົ້າ— ໜ້າ ຕາ ຂອງ ລາວ ບາດ
ເຈັບຫລາຍກວ່າຄົນອື່ນ, ແລະ ຮ່າງກາຍ
ຂອງລາວບາດເຈັບຫລາຍກວ່າບຸດຂອງ
ມະນຸດ—
45 ແຕ່ ລາວ ຈະ ເຮັດ ໃຫ້ ຊົນ ຊາດ ທັງ
ຫລາຍ [ກ]ອັດສະຈັນໃຈ; ກະສັດຈະປາກບໍ່
ອອກ; ເພາະພວກເພິ່ນຈະໄດ້ເຫັນສິ່ງທີ່ບໍ່
ເຄີຍບອກເລົ່າ; ແລະ ພວກເພິ່ນຈະພິຈາ
ລະນາສິ່ງທີ່ບໍ່ເຄີຍໄດ້ຍິນ.
46 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ສິ່ງທັງໝົດນີ້ຈະມາເຖິງຢ່າງແນ່ນອນ
ຕາມທີ່ພຣະບິດາໄດ້ບັນຊາເຮົາ. ເມື່ອນັ້ນ
ພັນທະສັນຍາທີ່ພຣະບິດາໄດ້ໃຫ້ໄວ້ກັບຜູ້
ຄົນຂອງພຣະອົງຈະສຳເລັດ; ແລະ ເມື່ອ
ນັ້ນ [ກ]ເຢຣູຊາເລັມຈະມີຜູ້ຄົນຂອງເຮົາອາ
ໄສຢູ່ອີກ, ແລະ ມັນຈະເປັນແຜ່ນດິນມູນມໍ
ລະດົກຂອງພວກເຂົາ.

## ບົດທີ 21

*ຊາວອິດສະຣາເອນຈະເຕົ້າໂຮມກັນເມື່ອພຣະຄຳພີມໍມອນອອກມາ—ຄົນຕ່າງຊາດຈະໄດ້ຮັບການສະຖາປະນາເປັນຜູ້ທີ່ມີອິດສະລະພາບຢູ່ໃນອາເມຣິກາ—ພວກເຂົາຈະລອດຖ້າຫາກພວກເຂົາເຊື່ອ ແລະ ເຊື່ອຟັງ; ຖ້າບໍ່ດັ່ງນັ້ນ, ພວກເຂົາຈະຖືກຕັດອອກ ແລະ ຖືກທຳລາຍ—ຊາວອິດສະຣາເອນຈະສ້າງເມືອງເຢຣູຊາເລັມໃໝ່ຂຶ້ນ, ແລະ ເຜົ່າຕ່າງໆທີ່ຫາຍໄປຈະກັບຄືນມາ. ປະມານ ຄ.ສ. 34.*

1 ແລະ ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ
ເຮົາຈະໃຫ້ເຄື່ອງໝາຍແກ່ເຈົ້າ, ເພື່ອເຈົ້າຈະ
ໄດ້ຮູ້ໃນ [ກ]ເວລາທີ່ສິ່ງເຫລົ່ານີ້ຈະເກີດຂຶ້ນ—
ຄືເຮົາຈະເຕົ້າໂຮມຜູ້ຄົນຂອງເຮົາຈາກການ
ແຕກກະຈັດກະຈາຍໄປເປັນເວລາດົນ
ນານຂອງພວກເຂົາ, ໂອ້ ເຊື້ອສາຍອິດສະ
ຣາເອນ, ແລະ ຈະສະຖາປະນາຊີໂອນຂອງ
ເຮົາຂຶ້ນໃນບັນດາພວກເຂົາອີກ;
2 ແລະ ຈົ່ງເບິ່ງນີ້ຄືສິ່ງທີ່ເຮົາຈະໃຫ້ແກ່
ເຈົ້າເປັນເຄື່ອງໝາຍ—ເພາະຕາມຈິງແລ້ວ
ເຮົາກ່າວກັບເຈົ້າວ່າ ເມື່ອສິ່ງເຫລົ່ານີ້ ຊຶ່ງ
ເຮົາໄດ້ປະກາດແກ່ເຈົ້າ, ແລະ ສິ່ງທີ່ເຮົາ
ຈະປະກາດແກ່ເຈົ້າກ່ຽວກັບຕົວເຮົາເອງຕໍ່
ຈາກນີ້ໄປ, ແລະ ໂດຍອຳນາດຂອງພຣະ
ວິນຍານບໍລິສຸດ ຊຶ່ງເຈົ້າຈະໄດ້ຮັບຈາກ
ພຣະບິດາຈະເປັນທີ່ຮູ້ຈັກແກ່ຄົນຕ່າງຊາດ
ເພື່ອພວກເຂົາຈະໄດ້ຮູ້ກ່ຽວກັບຜູ້ຄົນພວກ
ນີ້ ຊຶ່ງເປັນຜູ້ທີ່ເຫລືອຢູ່ຂອງເຊື້ອສາຍຂອງ
ຢາໂຄບ, ແລະ ກ່ຽວກັບຜູ້ຄົນພວກນີ້ຂອງ
ເຮົາ ຜູ້ທີ່ຈະຖືກພວກເຂົາເຮັດໃຫ້ແຕກກະ
ຈັດກະຈາຍໄປ;
3 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ເມື່ອ [ກ]ເລື່ອງເຫລົ່ານີ້ຈະເປັນທີ່ຮູ້ແກ່
ພວກເຂົາຈາກພຣະບິດາ, ແລະ ຈະອອກ
ມາຈາກພຣະບິດາ, ຈາກພວກເຂົາມາເຖິງ
ເຈົ້າ;
4 ເພາະ ມັນ ເປັນ ຄວາມ ສະຫລຽວ
ສະຫລາດຂອງພຣະບິດາທີ່ພວກເຂົາສົມ
ຄວນຖືກສະຖາປະນາຂຶ້ນໃນແຜ່ນດິນນີ້,

45 *ກ* ອຊຢ 52:15.
46 *ກ* ອທ 13:5, 11.
**21** 1 *ກ* ຄມພ ຍຸກສຸດທ້າຍ. ຈສ—ປ 1:34–36.
3 *ກ* ອທ 4:17;

ແລະ ຈັດຕັ້ງໃຫ້ເປັນຜູ້ຄົນທີ່ມີ [ກ]ອິດສະລະ
ພາບໂດຍອຳນາດຂອງພຣະບິດາ, ເພື່ອສິ່ງ
ເຫລົ່ານີ້ຈະໄດ້ອອກມາຈາກພວກເຂົາມາ
ຫາຜູ້ທີ່ເຫລືອຢູ່ຂອງລູກຫລານຂອງເຈົ້າ,
ເພື່ອ [ຂ]ພັນທະສັນຍາຂອງພຣະບິດາຊຶ່ງໃຫ້
ໄວ້ກັບຜູ້ຄົນຂອງພຣະອົງຈະສຳເລັດ, ໂອ້
ເຊື້ອສາຍອິດສະຣາເອນ;
5 ສະນັ້ນ, ວຽກງານເຫລົ່ານີ້ ແລະ ວຽກ
ງານທີ່ຈະມາເຖິງໃນບັນດາພວກເຈົ້ານັບ
ແຕ່ນີ້ໄປຈະອອກມາ [ກ]ຈາກຄົນຕ່າງຊາດ,
ແລະ ມາຫາ [ຂ]ລູກຫລານຂອງເຈົ້າ ຊຶ່ງ
ຈະເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖືເພາະ
ຄວາມຊົ່ວຮ້າຍ;
6 ເພາະພຣະບິດາເຫັນດັ່ງນັ້ນ ວ່າມັນ
ຄວນອອກມາຈາກ [ກ]ຄົນຕ່າງຊາດ, ເພື່ອ
ພຣະອົງຈະໄດ້ສະແດງອຳນາດຂອງພຣະ
ອົງຕໍ່ຄົນຕ່າງຊາດ, ເພື່ອດ້ວຍເຫດ ຄືຖ້າ
ຫາກຄົນຕ່າງຊາດຈະບໍ່ເຮັດໃຈແຂງກະ
ດ້າງ, ວ່າພວກເຂົາຈະກັບໃຈ ແລະ ມາຫາ
ເຮົາ ແລະ ຮັບບັບຕິສະມາໃນນາມຂອງ
ເຮົາ, ແລະ ຮູ້ເຖິງຫລັກທຳອັນແທ້ຈິງຂອງ
ຄຳສອນຂອງເຮົາ, ເພື່ອພວກເຂົາຈະໄດ້
[ຂ]ນັບເຂົ້າຢູ່ໃນບັນດາຜູ້ຄົນຂອງເຮົາ, ໂອ້
ເຊື້ອສາຍອິດສະຣາເອນ;
7 ແລະ ເມື່ອສິ່ງເຫລົ່ານີ້ເກີດຂຶ້ນຄື [ກ]ລູກ
ຫລານຂອງເຈົ້າຈະເລີ່ມຮູ້ເລື່ອງເຫລົ່ານີ້—
ມັນຈະເປັນເຄື່ອງໝາຍໃຫ້ແກ່ພວກເຂົາ
ເພື່ອພວກເຂົາຈະໄດ້ຮູ້ວ່າ ວຽກງານຂອງ
ພຣະບິດາໄດ້ເລີ່ມຕົ້ນແລ້ວ, ເພື່ອເຮັດໃຫ້
ພັນທະສັນຍາ ຊຶ່ງພຣະອົງໄດ້ກະທຳໄວ້ກັບ
ຜູ້ຄົນຜູ້ເປັນເຊື້ອສາຍອິດສະຣາເອນສຳ
ເລັດ.
8 ແລະ ເມື່ອມື້ນັ້ນມາເຖິງ, ເຫດການ
ຈະບັງເກີດຂຶ້ນຄື ກະສັດຈະປາກບໍ່ອອກ;
ເພາະພວກເພິ່ນຈະໄດ້ເຫັນສິ່ງທີ່ບໍ່ເຄີຍ
ບອກເລົ່າ; ແລະ ພວກເພິ່ນຈະພິຈາລະນາ
ສິ່ງທີ່ບໍ່ເຄີຍໄດ້ຍິນ.
9 ເພາະວ່າໃນມື້ນັ້ນ ເພື່ອເຮົາພຣະບິດາ
ຈະກະທຳວຽກງານຢ່າງໜຶ່ງ, ຊຶ່ງຈະເປັນ
ວຽກງານອັນຍິ່ງໃຫຍ່ ແລະ [ກ]ໜ້າອັດສະຈັນ
ໃຈໃນບັນດາພວກເຂົາ; ແລະ ຈະມີຄົນໃນ
ບັນດາພວກເຂົາທີ່ຈະບໍ່ເຊື່ອເລື່ອງນີ້, ເຖິງ
ແມ່ນວ່າຈະມີຄົນມາປະກາດເລື່ອງນີ້ແກ່
ເຂົາກໍຕາມ.
10 ແຕ່ຈົ່ງເບິ່ງ, ຊີວິດຂອງຂ້າໃຊ້ຂອງ
ເຮົາຈະຢູ່ໃນມືເຮົາ; ສະນັ້ນ ພວກເຂົາຈະບໍ່
ທຳຮ້າຍລາວ ເຖິງແມ່ນວ່າລາວຈະໄດ້ [ກ]ຮັບ
ບາດເຈັບເພາະພວກເຂົາກໍຕາມ. ແຕ່ເຮົາ
ຈະປິ່ນປົວລາວ ເພາະວ່າເຮົາຈະສະແດງ
ໃຫ້ພວກເຂົາເຫັນວ່າ ຄວາມສະຫລຽວ
ສະຫລາດ [ຂ]ຂອງເຮົານັ້ນຍິ່ງໃຫຍ່ກວ່າເລ່
ຫລ່ຽມຂອງມານ.
11 ສະນັ້ນ ເຫດການຈະບັງເກີດຂຶ້ນຄື ຜູ້
ໃດກໍຕາມທີ່ຈະບໍ່ເຊື່ອໃນຄຳຂອງເຮົາ, ຜູ້
ເປັນພຣະເຢຊູຄຣິດ ຊຶ່ງພຣະບິດາຈະເຮັດ
ໃຫ້ [ກ]ລາວນຳອອກໄປຫາຄົນຕ່າງຊາດ
ແລະ ຈະປະທານອຳນາດໃຫ້ລາວ ເພື່ອ
ລາວຈະນຳມັນອອກໄປຫາຄົນຕ່າງຊາດ,

4 *ກ* 1 ນຟ 13:17–19; ຄພ 101:77–80.
*ຂ* ມມ 5:20. ຄມພ ພັນທະສັນຍາຂອງອັບຣາຮາມ.
5 *ກ* 3 ນຟ 26:8.
*ຂ* 2 ນຟ 30:4–5; ມມ 5:15; ຄພ 3:18–19.
6 *ກ* 1 ນຟ 10:14; ຢຄ 5:54; 3 ນຟ 16:4–7.
*ຂ* ຄລຕ 3:7, 29; 3 ນຟ 16:13; ອຣຣ 2:9–11.
7 *ກ* 3 ນຟ 5:21–26.
9 *ກ* ອຊຢ 29:14; ກຈກ 13:41; 1 ນຟ 22:8. ຄມພ ການຟື້ນຟູພຣະກິດຕິຄຸນ.
10 *ກ* ຄພ 135:1–3.
*ຂ* ຄພ 10:43.
11 *ກ* 2 ນຟ 3:6–15; ມມ 8:16, 25.

(ມັນ ຈະ ເປັນ ໄປ ຄື ກັນ ກັບ ໂມເຊ ກ່າວ ໄວ້) ພວກເຂົາຈະຖືກ [ຂ]ຕັດອອກຈາກບັນດາຜູ້ຄົນຂອງເຮົາຜູ້ຢູ່ໃນພັນທະສັນຍາ.

12 ແລະ ຜູ້ຄົນຂອງເຮົາຜູ້ທີ່ເຫລືອຢູ່ຂອງຢາໂຄບຈະຢູ່ໃນບັນດາຄົນຕ່າງຊາດ, ແທ້ຈິງແລ້ວ, ຈະຢູ່ທ່າມກາງພວກເຂົາເໝືອນດັ່ງ [ກ]ສິງໃນບັນດາສັດໃນປ່າ, ແລະ ດັ່ງສິງໜຸ່ມຢູ່ໃນບັນດາຝູງແກະ ຊຶ່ງຖ້າຫາກມັນຜ່ານໄປ ທັງຈະ [ຂ]ຢຽບຢ່ຳ ແລະ ຈີກເປັນຕ່ອນໆ, ແລະ ບໍ່ມີໃຜປົດປ່ອຍໄດ້.

13 ມືຂອງພວກເຂົາຈະຍົກຢູ່ເທິງຜູ້ປໍລະປັກຂອງພວກເຂົາ, ແລະ ສັດຕູຂອງພວກເຂົາຈະຖືກຕັດອອກໄປທັງໝົດ.

14 ແທ້ຈິງແລ້ວ, ວິບັດແກ່ຄົນຕ່າງຊາດຖ້າຫາກພວກເຂົາບໍ່ [ກ]ກັບໃຈ; ເພາະເຫດການຈະບັງເກີດຂຶ້ນໃນມື້ນັ້ນ, ພຣະບິດາໄດ້ກ່າວ, ວ່າເຮົາຈະເອົາມ້າຂອງເຈົ້າໄປຈາກທ່າມກາງພວກເຈົ້າ, ແລະ ເຮົາຈະທຳລາຍລໍ້ຂອງເຈົ້າ;

15 ແລະ ເຮົາ ຈະ ທຳ ລາຍ ເມືອງ ທັງຫລາຍໃນແຜ່ນດິນຂອງເຈົ້າ, ແລະ ຈະຢຽບຢ່ຳທີ່ໝັ້ນທັງໝົດຂອງເຈົ້າ;

16 ແລະ ເຮົາຈະຕັດການໃຊ້ຄາຖາອອກໄປຈາກແຜ່ນດິນຂອງເຈົ້າ, ແລະ ເຈົ້າຈະບໍ່ມີໝໍດູອີກຕໍ່ໄປ;

17 [ກ]ຮູບຄວັດສະຫລັກຂອງເຈົ້າເຮົາຈະຕັດອອກນຳອີກ, ແລະ ຮູບບູຊາຂອງເຈົ້າອອກຈາກທ່າມກາງພວກເຈົ້າ, ແລະ ເຈົ້າຈະບໍ່ກາບໄຫວ້ວຽກງານຈາກມືຂອງເຈົ້າອີກຕໍ່ໄປ;

18 ແລະ ເຮົາຈະຖອນປ່າອອກຈາກທ່າມກາງພວກເຈົ້າ; ເຮົາຈະທຳລາຍເມືອງຂອງເຈົ້ານຳອີກ.

19 ແລະ ເຫດ ການ ຈະ ບັງ ເກີດ ຂຶ້ນ ຄື [ກ]ການ ເວົ້າຕົວະ, ແລະ ການຫລອກລວງ, ແລະ ການອິດສາບັງບຽດ, ແລະ ການຜິດຖຽງກັນ, ແລະ ການຫລອກລວງຂອງປະໂລຫິດ, ແລະ ການໂສເພນີ ຈະສູນສິ້ນໄປທັງໝົດ.

20 ເພາະເຫດການຈະບັງເກີດຂຶ້ນ, ພຣະບິດາໄດ້ກ່າວ, ວ່າໃນມື້ນັ້ນຜູ້ໃດກໍຕາມທີ່ຈະບໍ່ກັບໃຈ ແລະ ບໍ່ມາຫາບຸດທີ່ຮັກຂອງເຮົາ, ເຮົາຈະຕັດເຂົາອອກຈາກບັນດາຜູ້ຄົນຂອງເຮົາ, ໂອ້ ເຊື້ອສາຍອິດສະຣາເອນ;

21 ແລະ ເຮົາຈະທຳການແກ້ແຄ້ນ ແລະ ໂມໂຫຮ້າຍພວກເຂົາດັ່ງທີ່ກັບຄົນນອກສາດສະໜາ, ຢ່າງທີ່ພວກເຂົາບໍ່ເຄີຍໄດ້ຍິນ.

22 ແຕ່ຖ້າຫາກພວກເຂົາຈະກັບໃຈ ແລະ ເຊື່ອຟັງຄຳຂອງເຮົາ, ແລະ ບໍ່ເຮັດໃຈແຂງກະດ້າງແລ້ວ, ເຮົາຈະ [ກ]ສະຖາປະນາສາດສະໜາຈັກຂອງເຮົາຂຶ້ນໃນບັນດາພວກເຂົາ, ແລະ ພວກເຂົາຈະເຂົ້າມາສູ່ພັນທະສັນຍາ ແລະ ຖືກ [ຂ]ນັບເຂົ້າຢູ່ໃນບັນດາຜູ້ທີ່ເຫລືອຢູ່ນີ້ຂອງຢາໂຄບ, ຊຶ່ງເຮົາໄດ້ມອບແຜ່ນດິນນີ້ໃຫ້ເປັນມູນມໍລະດົກຂອງພວກເຂົາ;

23 ແລະ ພວກເຂົາຈະຊ່ອຍເຫລືອຜູ້ຄົນຂອງເຮົາ, ຜູ້ທີ່ເຫລືອຢູ່ຂອງຢາໂຄບ, ແລະ ຫລາຍຕໍ່ຫລາຍຄົນຂອງເຊື້ອສາຍອິດສະຣາເອນທີ່ຈະກັບມາອີກ, ເພື່ອພວກເຂົາຈະສ້າງເມືອງໜຶ່ງຂຶ້ນ, ຊຶ່ງຈະຖືກເອີ້ນວ່າ [ກ]ເຢຣູຊາເລັມໃໝ່.

---

11 *ຂ* ຄພ 1:14.
12 *ກ* ມກ 5:8–15; 3 ນຟ 20:16.
*ຂ* 3 ນຟ 16:13–15.
14 *ກ* 2 ນຟ 10:18; 33:9.
17 *ກ* ອພຍ 20:3–4; ມຊຍ 13:12–13; ຄພ 1:16. ຄມພ ການນັບຖືຮູບບູຊາ.
19 *ກ* 3 ນຟ 30:2.
22 *ກ* ຄມພ ຍຸກສະໄໝ.
*ຂ* 2 ນຟ 10:18–19; 3 ນຟ 16:13.
23 *ກ* 3 ນຟ 20:22; ອທ 13:1–12. ຄມພ ເຢຣູຊາເລັມໃໝ່.

24 ແລະ ແລ້ວພວກເຂົາຈະຊ່ວຍເຫລືອ
ຜູ້ຄົນຂອງເຮົາເພື່ອພວກເຂົາທີ່ແຕກກະຈັດ
ກະຈາຍກັນໄປຕາມພື້ນແຜ່ນດິນຈະໄດ້ຖືກ
ເຕົ້າໂຮມມາສູ່ເຢຣູຊາເລັມໃໝ່.
25 ແລະ ແລ້ວ [ກ]ອຳນາດຂອງສະຫວັນ
ຈະລົງມາເທິງບັນດາພວກເຂົາ; ແລະ [ຂ]ເຮົາ
ຈະຢູ່ໃນທ່າມກາງພວກເຂົາເໝືອນກັນ.
26 ແລະ ແລ້ວວຽກງານຂອງພຣະບິດາ
ຈະເລີ່ມຕົ້ນໃນມື້ນັ້ນ, ເມື່ອພຣະກິດຕິຄຸນ
ນີ້ຖືກສັ່ງສອນໃນບັນດາຜູ້ທີ່ເຫລືອຢູ່ຂອງ
ຜູ້ຄົນພວກນີ້. ຕາມຈິງແລ້ວເຮົາກ່າວກັບ
ເຈົ້າວ່າ ໃນມື້ນັ້ນວຽກງານຂອງພຣະບິດາ
ຈະ [ກ]ເລີ່ມຕົ້ນໃນບັນດາຜູ້ຄົນທັງໝົດຂອງ
ເຮົາທີ່ແຕກກະຈັດກະຈາຍກັນໄປ, ແທ້ຈິງ
ແລ້ວ, ແມ່ນແຕ່ເຜົ່າທີ່ [ຂ]ຫາຍໄປ, ຊຶ່ງພຣະ
ບິດາໄດ້ນຳພວກເຂົາອອກໄປຈາກເຢຣູ
ຊາເລັມ.
27 ແທ້ ຈິງ ແລ້ວ, ວຽກ ງານ ຈະ ເລີ່ມ ຕົ້ນ
ດ້ວຍ ພຣະບິດາໃນບັນ ດາຜູ້ຄົນທັງໝົດ
ຂອງເຮົາທີ່ [ກ]ແຕກກະຈັດກະຈາຍກັນໄປ,
ເພື່ອຕຽມທາງໄວ້ ຊຶ່ງໂດຍທາງນັ້ນ ພວກ
ເຂົາຈະມາຫາເຮົາ, ເພື່ອພວກເຂົາຈະໄດ້
ເອີ້ນຫາພຣະບິດາໃນນາມຂອງເຮົາ.
28 ແທ້ຈິງແລ້ວ, ແລະ ແລ້ວວຽກງານຈະ
ເລີ່ມຕົ້ນດ້ວຍພຣະບິດາໃນບັນດາປະຊາ
ຊາດທັງປວງ ໃນການຕຽມທາງໄວ້ ຊຶ່ງທາງ
ນັ້ນ ພຣະອົງຈະ [ກ]ເຕົ້າໂຮມຜູ້ຄົນຂອງພຣະ
ອົງກັບບ້ານ ສູ່ແຜ່ນດິນຊຶ່ງເປັນມູນມໍລະດົກ
ຂອງພວກເຂົາ.
29 ແລະ ພວກເຂົາຈະອອກຈາກປະຊາ
ຊາດທັງໝົດ; ແລະ ພວກເຂົາຈະບໍ່ອອກໄປ
ດ້ວຍ [ກ]ຄວາມຮີບຮ້ອນ, ຫລື ຫລົບໜີໄປ,
ເພາະເຮົາຈະນຳໜ້າພວກເຂົາໄປ, ພຣະ
ບິດາໄດ້ກ່າວ, ແລະ ເຮົາຈະຮັກສາທາງ
ຫລັງຂອງພວກເຂົາ.

## ບົດທີ 22

*ເມືອງຊີໂອນ ແລະ ຫລັກຂອງມັນຈະຖືກ ສະຖາປະນາຂຶ້ນໃນຍຸກສຸດທ້າຍ, ແລະ ຊາວອິດສະຣາເອນຈະຖືກເຕົ້າໂຮມເຂົ້າ ກັນໃນຄວາມເມດຕາ ແລະ ຄວາມອ່ອນ ໂຍນ—ພວກເຂົາຈະໄຊຊະນະ—ປຽບ ທຽບກັບ ເອຊາຢາ 54. ປະມານ ຄ.ສ. 34.*

1 ແລະ ເມື່ອນັ້ນສິ່ງທີ່ມີຂຽນໄວ້ຈະເກີດ
ຂຶ້ນ: ຈົ່ງຮ້ອງລຳທຳເພງເຖີດ, ໂອ້ ເຈົ້າຜູ້ເປັນ
ເໝືອນຍິງໝັນ; ຈົ່ງ [ກ]ຮ້ອງລຳທຳເພງ ແລະ
ມ່ວນຊື່ນເຖີດ, ເຈົ້າຜູ້ບໍ່ເຄີຍເຈັບທ້ອງອອກ
ລູກເອີຍ; ເພາະວ່າເຈົ້າຈະມີລູກຫລາຍກວ່າ
ຍິງທີ່ມີຜົວ, ພຣະຜູ້ເປັນເຈົ້າໄດ້ກ່າວ.
2 ຈົ່ງ ເຮັດ ຜ້າ ເຕັ້ນ ຂອງເຈົ້າ ໃຫ້ກວ້າງ
ຂວາງ, ແລະ ຕໍ່ເຊືອກຜ້າເຕັ້ນຂອງເຈົ້າໃຫ້
ຍາວ; ແລະ ສຽບ [ກ]ຫລັກຂອງເຈົ້າໃຫ້ແໜ້ນ;
3 ເພາະເຈົ້າຈະຂະຫຍາຍເຂດອອກໄປ
ທາງມືຂວາ ແລະ ຊ້າຍ, ແລະ ຜູ້ຄົນຂອງ
ເຈົ້າໄດ້ [ກ]ຄົນຕ່າງຊາດມາເປັນມໍລະດົກ
ແລະ ເຮັດໃຫ້ເມືອງຮົກຮ້າງເປັນບ່ອນອາ
ໄສ.
4 ຢ່າ ສູ່ ຢ້ານ, ເຈົ້າ ຈະ ບໍ່ ອາຍ; ທັງ ເຈົ້າ
ຈະ ບໍ່ ຈຳ ນົນ, ເພາະ ເຈົ້າ ຈະບໍ່ ຖືກເຮັດ ໃຫ້
[ກ]ອາຍ; ເຈົ້າຈະລືມຄວາມອາຍໃນໄວເຍົາ
ຂອງເຈົ້າ, ແລະ ຈະບໍ່ຈື່ຈຳຄວາມຕຳນິໃນ

25 *ກ* 1 ນຟ 13:37.
*ຂ* ອຊຢ 2:2–4; 3 ນຟ 24:1.
26 *ກ* 1 ນຟ 14:17; 3 ນຟ 21:6–7.
*ຂ* ຄມພ ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.
27 *ກ* 3 ນຟ 16:4–5.
28 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
29 *ກ* ອຊຢ 52:12; 3 ນຟ 20:42.
**22** 1 *ກ* ຄມພ ຮ້ອງ.
2 *ກ* ຄມພ ສະເຕກ.
3 *ກ* ຄມພ ຄົນຕ່າງຊາດ.
4 *ກ* 2 ນຟ 6:7, 13.

ຄາວ ໄວ ເຍົາ ຂອງ ເຈົ້າ, ແລະ ຈະ ບໍ່ ຈື່ ຈໍາ ຄວາມຕໍານິຂອງຄວາມເປັນໝ້າຍຂອງເຈົ້າອີກຕໍ່ໄປ.

5 ເພາະຜູ້ສ້າງຂອງເຈົ້າ, ສາມີຂອງເຈົ້າ, ຈອມ ໂຍ ທາ ຄື ພຣະ ນາມ ຂອງ ພຣະ ອົງ; ແລະ ພຣະຜູ້ໄຖ່ຂອງເຈົ້າ, ແລະ ພຣະຜູ້ບໍລິສຸດຂອງອິດສະຣາເອນ—ພຣະອົງຈະຖືກເອີ້ນວ່າ ພຣະເຈົ້າຂອງທັງແຜ່ນດິນໂລກ.

6 ເພາະພຣະຜູ້ເປັນເຈົ້າໄດ້ເອີ້ນເຈົ້າເປັນເໝືອນເມຍສາວທີ່ຖືກຜົວປະຖິ້ມ ແລະ ມີວິນຍານໂສກເສົ້າ, ແລະ ເປັນເມຍສາວຄາວເຈົ້າເປັນໝ້າຍ, ພຣະຜູ້ເປັນເຈົ້າຂອງເຈົ້າກ່າວ.

7 ເຮົາໄດ້ປະຖິ້ມເຈົ້າພຽງແຕ່ໄລຍະຊົ່ວຄາວ, ແຕ່ເຮົາຈະເອົາເຈົ້າຄືນດ້ວຍຄວາມຮັກອັນສຸດຊຶ້ງ.

8 ໃນຄວາມໂມໂຫຮ້າຍເລັກໜ້ອຍ ເຮົາໄດ້ເຊື່ອງໜ້າເຮົາຈາກເຈົ້າຊົ່ວຄາວ, ແຕ່ດ້ວຍຄວາມກະລຸນາອັນເປັນນິດ ເຮົາຈະມີ [ກ]ເມດຕາຕໍ່ເຈົ້າ, ພຣະຜູ້ເປັນເຈົ້າອົງເປັນພຣະຜູ້ໄຖ່ຂອງເຈົ້າໄດ້ກ່າວ.

9 ເພາະ [ກ]ການນີ້, ເໝືອນ [ຂ]ຜືນນໍ້າແຫ່ງໂນອາຕໍ່ເຮົາ, ເພາະເຮົາໄດ້ສັນຍາວ່າ ຜືນນໍ້າແຫ່ງໂນອາ ຈະບໍ່ໄຫລຖ້ວມແຜ່ນດິນໂລກອີກຕໍ່ໄປສັນໃດ, ເຮົາຈຶ່ງສັນຍາວ່າເຮົາຈະບໍ່ໂມໂຫຮ້າຍເຈົ້າສັນນັ້ນ.

10 [ກ]ພູໃຫຍ່ ແລະ ພູນ້ອຍອາດພັງທະລາຍລົງ, ແຕ່ຄວາມຮັກຂອງເຮົາ [ຂ]ໝັ້ນຄົງບໍ່ສິ້ນສຸດໄດ້, ທັງເຮົາຈະຮັກສາສັນຍາແຫ່ງສັນຕິພາບໄວ້ສືບໄປ, ພຣະຜູ້ເປັນເຈົ້າທີ່ມີຄວາມເມດຕາຕໍ່ເຈົ້າໄດ້ກ່າວ.

11 ໂອ້ ເຈົ້າຜູ້ເປັນທຸກ, ຜູ້ຖືກໂຍນໄປດ້ວຍພະຍຸຝົນຟ້າຄະນອງ, ແລະ ບໍ່ໄດ້ຮັບການປອບໂຍນ! ຈົ່ງເບິ່ງ, ເຮົາຈະວາງ [ກ]ຫີນຂອງເຈົ້າດ້ວຍສີສວຍງາມ, ແລະ ຈະວາງຮາກຖານຂອງເຈົ້າດ້ວຍຫີນປະເສີດ.

12 ແລະ ເຮົາຈະສ້າງປ່ອງຢ້ຽມຂອງເຈົ້າດ້ວຍທັບທິມ, ແລະ ປະຕູຂອງເຈົ້າດ້ວຍແກ້ວເຈຍລະໄນ, ແລະ ກໍາແພງເມືອງທັງໝົດຂອງເຈົ້າດ້ວຍເພັດນິນຈິນດາ.

13 ແລະ ລູກຫລານ [ກ]ທັງໝົດຂອງເຈົ້າຈະໄດ້ຮັບການສິດສອນເລື່ອງພຣະຜູ້ເປັນເຈົ້າ; ແລະ ສັນຕິສຸກຂອງລູກຫລານຂອງເຈົ້າຈະຍິ່ງໃຫຍ່.

14 ເຈົ້າ ຈະ ຖືກ ສະຖາ ປະນາ ຂຶ້ນ ໃນ [ກ]ຄວາມຊອບທໍາ; ເຈົ້າຈະຫ່າງຈາກການກົດຂີ່ ເພາະເຈົ້າຈະບໍ່ຢ້ານ, ແລະ ຫ່າງຈາກຄວາມຫວາດກົວ ເພາະມັນຈະບໍ່ມາໃກ້ເຈົ້າ.

15 ຈົ່ງເບິ່ງ, ພວກເຂົາຈະຮ່ວມກັນຕໍ່ສູ້ເຈົ້າຢ່າງແນ່ນອນ, ແຕ່ບໍ່ແມ່ນໂດຍເຮົາ; ຜູ້ໃດກໍຕາມທີ່ຈະຮ່ວມກັນຕໍ່ຕ້ານເຈົ້າ ກໍຈະລົ້ມລົງ.

16 ຈົ່ງເບິ່ງ, ເຮົາໄດ້ສ້າງຊ່າງຕີເຫລັກເປົ່າຖ່ານໃນໄຟ, ແລະ ນໍາເຄື່ອງມືທີ່ເຂົາສ້າງອອກມາ; ແລະ ເຮົາໄດ້ສ້າງຜູ້ມ້າງເພເພື່ອທໍາລາຍ.

17 ບໍ່ມີອາວຸດໃດໆທີ່ຖືກເຮັດຂຶ້ນເພື່ອໃຊ້ກັບເຈົ້າຈະໄດ້ຜົນ; ແລະ ເຈົ້າຈະລົງໂທດລີ້ນທຸກລີ້ນທີ່ຈະລຸກຂຶ້ນໝິ່ນປະໝາດເຈົ້າໃນການພິພາກສາ. ນີ້ຄືມໍລະດົກຂອງຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ, ແລະ ຄວາມຊອບທໍາຂອງພວກເຂົາມາຈາກເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

---

8 ກ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
9 ກ ອຊຢ 54:9.
ຂ ຄມພ ນໍ້າຖ້ວມໃນວັນເວລາຂອງໂນອາ.
10 ກ ອຊຢ 40:4.
ຂ ພສສ 94:14; ຄພ 35:25.
11 ກ ພນມ 21:18–21.
13 ກ ຢມຢ 31:33–34.
14 ກ ຄມພ ຊອບທໍາ, ຄວາມຊອບທໍາ.

## ບົດທີ 23

*ພຣະ ເຢຊູ ເ ຫັນ ພ້ອມ ກັບ ຄຳ ຂອງ ເອຊາ ຢາ—ພຣະອົງບັນຊາໃຫ້ຜູ້ຄົນຄົ້ນຫາສາດ ສະດາ—ຄຳຂອງຊາມູເອນຄົນເລມັນກ່ຽວ ກັບການຟື້ນຄືນຊີວິດຖືກບັນທຶກໄວ້ໃນ ແຜ່ນຈາລຶກ. ປະມານ ຄ.ສ. 34.*

1 ແລະ ບັດນີ້, ຈົ່ງເບິ່ງເຮົາກ່າວກັບເຈົ້າ
ວ່າ ເຈົ້າຄວນ [ກ]ຄົ້ນຫາສິ່ງເຫລົ່ານີ້. ແທ້ຈິງ
ແລ້ວ, ເຮົາໃຫ້ບັນຍັດແກ່ເຈົ້າເພື່ອໃຫ້ຄົ້ນ
ຫາສິ່ງເຫລົ່ານີ້ຢ່າງພາກພຽນ; ເພາະວ່າຄຳ
ເວົ້າຂອງ [ຂ]ເອຊາຢານັ້ນໃຫຍ່ຍິ່ງ.
2 ເພາະເພິ່ນໄດ້ເວົ້າໄວ້ໃນທຸກເລື່ອງກ່ຽວ
ກັບຜູ້ຄົນຂອງເຮົາແທ້ໆ ຜູ້ຊຶ່ງເປັນເຊື້ອ
ສາຍອິດສະຣາເອນ; ສະນັ້ນ ຈຶ່ງຈຳເປັນທີ່
ເພິ່ນຈະຕ້ອງເວົ້າກັບຄົນຕ່າງຊາດເໝືອນ
ກັນ.
3 ແລະ ທຸກເລື່ອງທີ່ເພິ່ນໄດ້ເວົ້າໄວ້ ໄດ້
ເກີດຂຶ້ນ ແລະ [ກ]ຈະເກີດຂຶ້ນຕາມຄຳທີ່ເພິ່ນ
ເວົ້າ.
4 ສະນັ້ນ ຈົ່ງເອົາໃຈໃສ່ໃນຄຳຂອງເຮົາ;
ຈົ່ງຂຽນເລື່ອງທີ່ເຮົາບອກເຈົ້າ; ແລະ ຕາມ
ພຣະປະສົງຂອງພຣະບິດາທີ່ເຫັນວ່າສົມ
ຄວນ ມັນຈະອອກໄປຫາຄົນຕ່າງຊາດ.
5 ແລະ ຜູ້ໃດກໍຕາມທີ່ຈະເຊື່ອຟັງຄຳຂອງ
ເຮົາ ແລະ ກັບໃຈ ແລະ ຮັບບັບຕິສະມາ
ຜູ້ນັ້ນຈະລອດ. ຈົ່ງຄົ້ນຫາ [ກ]ສາດສະດາ,
ເພາະວ່າຫລາຍຄົນໄດ້ໃຫ້ຖ້ອຍຄຳໄວ້ເຖິງ
ເລື່ອງເຫລົ່ານີ້.
6 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອພຣະເຢຊູກ່າວຂໍ້ຄວາມເຫລົ່ານີ້ແລ້ວ,
ພຣະອົງກໍໄດ້ກ່າວກັບພວກເຂົາອີກ, ຫລັງ
ຈາກທີ່ພຣະອົງໄດ້ຊີ້ແຈງພຣະຄຳພີທັງໝົດ
ກັບພວກເຂົາ ຊຶ່ງພວກເຂົາໄດ້ຮັບມາ, ພຣະ
ອົງໄດ້ກ່າວກັບພວກເຂົາວ່າ: ຈົ່ງເບິ່ງ, ເຮົາ
ຢາກໃຫ້ເຈົ້າຂຽນພຣະຄຳພີອື່ນທີ່ເຈົ້າຍັງບໍ່
ມີ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ອົງໄດ້ກ່າວກັບນີໄຟວ່າ: ຈົ່ງເອົາບັນທຶກທີ່
ເຈົ້າມີອອກມາ.
8 ແລະ ເວລານີໄຟໄດ້ເອົາບັນທຶກອອກ
ມາ ແລະ ວາງໄວ້ຕໍ່ພຣະພັກຂອງພຣະອົງ,
ແລ້ວພຣະອົງໄດ້ທອດພຣະເນດເບິ່ງມັນ
ແລະ ກ່າວວ່າ:
9 ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ, ເຮົາ
ໄດ້ສັ່ງໃຫ້ [ກ]ຊາມູເອນຄົນເລມັນຂ້າໃຊ້ຂອງ
ເຮົາໃຫ້ຖ້ອຍຄຳກັບຜູ້ຄົນພວກນີ້, ວ່າໃນມື້
ທີ່ພຣະບິດາຈະແຜ່ບາລະມີພຣະນາມຂອງ
ພຣະອົງໃນເຮົາ ຈະມີ [ຂ]ໄພ່ພົນຂອງເຮົາ
[ຄ]ເປັນຈຳນວນຫລວງຫລາຍທີ່ຈະ [ງ]ລຸກຂຶ້ນ
ຈາກຄວາມຕາຍ, ແລະ ຈະມາປະກົດແກ່ຜູ້
ຄົນຢ່າງຫລວງຫລາຍ, ແລະ ຈະປະຕິບັດ
ສາດສະໜາກິດແກ່ພວກເຂົາ. ແລະ ພຣະ
ອົງໄດ້ກ່າວກັບພວກເພິ່ນວ່າ: ມັນບໍ່ໄດ້ເປັນ
ເຊັ່ນນັ້ນບໍ?
10 ແລະ ສານຸສິດຂອງພຣະອົງໄດ້ຕອບ
ພຣະອົງ ແລະ ກ່າວວ່າ: ແມ່ນແລ້ວ, ພຣະ
ອົງເຈົ້າເອີຍ, ຊາມູເອນໄດ້ທຳນາຍຕາມ
ພຣະຄຳຂອງພຣະອົງ, ແລະ ພຣະຄຳ
ເຫລົ່ານັ້ນສຳເລັດແລ້ວທັງໝົດ.
11 ແລະ ພຣະເຢຊູໄດ້ກ່າວກັບພວກ
ເພິ່ນວ່າ: ດ້ວຍເຫດໃດເຈົ້າຈຶ່ງບໍ່ຂຽນເລື່ອງ
ນີ້ໄວ້, ເລື່ອງທີ່ໄພ່ພົນຂອງເຮົາຢ່າງຫລວງ
ຫລາຍໄດ້ລຸກຂຶ້ນ ແລະ ໄດ້ມາປະກົດແກ່

**23** 1 *ກ* ຄມພ ພຣະຄຳພີ.
*ຂ* 2 ນຟ 25:1–5; ມມ 8:23. ຄມພ ເອຊາຢາ.
3 *ກ* 3 ນຟ 20:11–12.
5 *ກ* ລກ 24:25–27.
9 *ກ* ຮລມ 13:2.
*ຂ* ຄມພ ໄພ່ພົນຂອງພຣະເຈົ້າ.
*ຄ* ຮລມ 14:25.
*ງ* ມທ 27:52–53. ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.

ຜູ້ຄົນຢ່າງຫລວງຫລາຍ ແລະ ໄດ້ປະຕິບັດ
ສາດສະໜາກິດແກ່ພວກເຂົາ?
12 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ນີໄຟຈຳໄດ້ວ່າ ເລື່ອງນີ້ບໍ່ໄດ້ຖືກຂຽນໄວ້.
13 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະເຢຊູໄດ້ບັນຊາໃຫ້ຂຽນເລື່ອງນີ້ໄວ້;
ສະນັ້ນ ມັນຈຶ່ງມີຂຽນໄວ້ຕາມທີ່ພຣະອົງໄດ້
ບັນຊາ.
14 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນ
ຄື ເມື່ອພຣະເຢຊູໄດ້ [ກ]ຊີ້ແຈງພຣະຄຳພີທັງ
ໝົດແລ້ວ ຊຶ່ງພວກເພິ່ນໄດ້ຂຽນໄວ້, ພຣະ
ອົງໄດ້ບັນຊາໃຫ້ພວກເພິ່ນສິດສອນເລື່ອງ
ທີ່ພຣະອົງໄດ້ຊີ້ແຈງມານັ້ນແກ່ພວກເຂົາ.

## ບົດທີ 24

*ທູດຂອງພຣະຜູ້ເປັນເຈົ້າຈະຈັດຕຽມທາງ ສຳລັບການສະເດັດມາຄັ້ງທີສອງ—ພຣະ ຄຣິດ ຈະ ປະ ທັບ ນັ່ງ ເປັນຜູ້ພິພາກສາ— ຊາວ ອິດສະຣາເອນ ຖືກ ບັນຊາ ໃຫ້ ຈ່າຍ ສ່ວນ ສິບ ແລະ ຖວາຍ ເຄື່ອງບູຊາ—ປຶ້ມ ແຫ່ງ ຄວາມ ຊົງ ຈຳ ຖືກ ຮັກ ສາ ໄວ້—ປຽບ ທຽບກັບ ມາລາກີ 3. ປະມານ ຄ.ສ. 34.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ອົງບັນຊາໃຫ້ພວກເພິ່ນຂຽນຖ້ອຍຄຳຊຶ່ງ
ພຣະບິດາໄດ້ປະທານໃຫ້ແກ່ມາລາກີ ຊຶ່ງ
ພຣະອົງຈະບອກແກ່ພວກເພິ່ນ. ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ຫລັງຈາກທີ່ພວກ
ເພິ່ນໄດ້ຂຽນຂໍ້ຄວາມເຫລົ່ານີ້ແລ້ວ ພຣະ
ອົງໄດ້ຊີ້ແຈງກັບພວກເພິ່ນ. ແລະ ນີ້ຄືຂໍ້
ຄວາມທີ່ພຣະອົງໄດ້ບອກແກ່ພວກເພິ່ນ,
ມີຄວາມວ່າ: ພຣະບິດາກ່າວກັບມາລາກີ
ດັ່ງນີ້—ຈົ່ງເບິ່ງ, ເຮົາຈະສົ່ງ [ກ]ທູດຂອງເຮົາ
ໄປຈັດຕຽມທາງໄວ້ສຳລັບເຮົາ, ແລ້ວ ໃນ
ທັນ ໃດ ນັ້ນ ພຣະ ຜູ້ ເປັນ ເຈົ້າ ອົງທີ່ພວກ
ເຈົ້າສະແຫວງຫາກໍຈະສະເດັດມາທີ່ພຣະ
ວິຫານຂອງພຣະອົງ, ເຖິງແມ່ນທູດແຫ່ງ
ພັນທະສັນຍາຊຶ່ງພວກເຈົ້າເບີກບານໃນ
ພຣະອົງ; ຈົ່ງເບິ່ງ, ພຣະອົງຈະມາ, ຈອມ
ໂຍທາໄດ້ກ່າວ.
2 ແຕ່ໃຜຈະ [ກ]ຢູ່ໃນວັນທີ່ພຣະອົງສະເດັດ
ມາ? ໃຜຈະຢືນຢູ່ເມື່ອພຣະອົງສະເດັດມາ
ປະກົດ? ເພາະວ່າພຣະອົງເປັນເໝືອນດັ່ງ
ໄຟທີ່ [ຂ]ຫລອມໂລຫະ, ແລະ ເປັນເໝືອນດັ່ງ
ສະບູທີ່ມີພະລັງແຮງຂອງຄົນຊັກຜ້າ.
3 ແລະ ພຣະ ອົງຈະ ປະ ທັບ ນັ່ງດັ່ງຜູ້
ຫລອມເງິນໃຫ້ບໍລິສຸດ; ແລະ ພຣະອົງຈະ
ຊຳລະ [ກ]ພວກລູກຊາຍຂອງເລວີ, ແລະ
ເຮັດໃຫ້ພວກເຂົາບໍລິສຸດ ດັ່ງດຽວກັນກັບ
ຄຳ ແລະ ເງິນທີ່ຫລອມແລ້ວ, ເພື່ອພວກ
ເຂົາຈະນຳເຄື່ອງຖວາຍບູຊາທີ່ຖືກຕ້ອງມາ
[ຂ]ຖວາຍແດ່ພຣະຜູ້ເປັນເຈົ້າ.
4 ເມື່ອນັ້ນ ເຄື່ອງຖວາຍຂອງຢູດາ ແລະ
ເຢຣູຊາເລັມຈະເປັນທີ່ພໍພຣະໄທຕໍ່ພຣະຜູ້
ເປັນເຈົ້າດັ່ງໃນສະໄໝບູຮານ ແລະ ດັ່ງປີ
ກ່ອນໆ.
5 ແລະ ເຮົາ ຈະ ມາ ໃກ້ ເຈົ້າ ເພື່ອ ພິ ພາກ
ສາ; ແລະ ເຮົາຈະເປັນພະຍານຕໍ່ສູ້ພວກ
ໝໍເວດມົນຄາຖາໃນທັນທີ, ແລະ ຕໍ່ສູ້ພວກ
ທີ່ຫລິ້ນຊູ້ສູ່ຜົວເມຍ, ແລະ ຕໍ່ສູ້ພວກທີ່ເປັນ
ພະຍານເທັດ, ແລະ ຕໍ່ສູ້ພວກທີ່ສໍ້ໂກງຄ່າ
ແຮງງານຂອງລູກຈ້າງ, ຕໍ່ສູ້ພວກທີ່ ເອົາ

---

14 *ກ* ລກ 24:44–46.
**24** 1 *ກ* ຄພ 45:9.
2 *ກ* 3 ນຟ 25:1.
*ຂ* ຊກຍ 13:9; ຄພ 128:24.
ຄມພ ການສະເດັດມາ ຄັ້ງທີສອງຂອງພຣະເຢຊູ ຄຣິດ; ແຜ່ນດິນໂລກ—ການ ຊຳລະລ້າງແຜ່ນດິນໂລກ.
3 *ກ* ພບຍ 10:8; ຄພ 84:31–34.
*ຂ* ຄພ 13.

ປຸງບ ແມ່ໝ້າຍ ແລະ [ກ]ເດັກກຳພ້າ, ແລະ
ຄົນຕ່າງດ້າວ, ແລະ ຕໍ່ສູ້ພວກທີ່ບໍ່ຢຳເກງ
ເຮົາ, ຈອມໂຍທາໄດ້ກ່າວ.
6 ເພາະ ເຮົາຄືພຣະຜູ້ເປັນເຈົ້າ, ເຮົາບໍ່
ປ່ຽນແປງ; ສະນັ້ນ ພວກເຈົ້າຜູ້ເປັນເຊື້ອ
ສາຍຂອງຢາໂຄບຍັງບໍ່ສູນສິ້ນໄປເທື່ອ.
7 ເຖິງແມ່ນຕັ້ງແຕ່ວັນເວລາຂອງບັນພະ
ບຸລຸດຂອງພວກເຈົ້າ, ພວກເຈົ້າໄດ້ [ກ]ໄປ
ຈາກພິທີການຂອງເຮົາ, ແລະ ບໍ່ໄດ້ຮັກສາ
ມັນ. ຈົ່ງ [ຂ]ກັບມາຫາເຮົາ ແລະ ເຮົາຈະກັບ
ໄປຫາພວກເຈົ້າ, ຈອມໂຍທາໄດ້ກ່າວ. ແຕ່
ພວກເຈົ້າຖາມວ່າ: ພວກຂ້າພຣະອົງຈະ
ເຮັດຢ່າງໃດຈຶ່ງຈະສາມາດກັບໄປຫາພຣະ
ອົງໄດ້?
8 ມັນ ເປັນ ການ ຖືກ ຕ້ອງ ບໍ ທີ່ ມະນຸດ ສໍ້
ໂກງພຣະເຈົ້າ? ແຕ່ເຈົ້າໄດ້ສໍ້ໂກງເຮົາ. ແຕ່
ພວກເຈົ້າຖາມວ່າ: ສໍ້ໂກງຢ່າງໃດ? ກໍສໍ້
ໂກງໃນເລື່ອງໜຶ່ງ [ກ]ສ່ວນສິບ ແລະ [ຂ]ເຄື່ອງ
ຖວາຍຕ່າງໆນັ້ນແຫລະ.
9 ພວກເຈົ້າຖືກສາບແຊ່ງດ້ວຍຄຳສາບ
ແຊ່ງ, ກໍເພາະວ່າຄົນທັງຊາດສໍ້ໂກງເຮົາ.
10 ຈົ່ງນຳເງິນເຕັມຈຳນວນໜຶ່ງ [ກ]ສ່ວນ
ສິບມາຍັງຄັງ ເພື່ອວ່າຈະມີອາຫານໃນ
ບ້ານຂອງເຮົາ; ຈົ່ງລອງເຮັດຢ່າງນັ້ນກັບ
ເຮົາເບິ່ງ, ຈອມໂຍທາໄດ້ກ່າວ, ແລະ ພວກ
ເຈົ້າຈະເຫັນວ່າ ເຮົາຈະໄຂປະຕູສະຫວັນ
ແລະ ຖອກເທ [ຂ]ພຣະພອນລົງມາຍັງພວກ
ເຈົ້າ ຈົນວ່າບໍ່ມີບ່ອນໃສ່ມັນໄວ້.
11 ແລະ ເຮົາຈະຕິຕຽນຜູ້ທີ່ກືນກິນ ເພາະ
ເຫັນແກ່ພວກເຈົ້າ, ແລະ ມັນຈະບໍ່ທຳຮ້າຍ
ຜົນຈາກດິນຂອງພວກເຈົ້າ; ທັງຕົ້ນອະງຸ່ນ
ຂອງພວກເຈົ້າກໍຈະມີໝາກຫລາຍກ່ອນ
ເວລາ, ຈອມໂຍທາໄດ້ກ່າວ.
12 ແລະ ທຸກປະຊາຊາດຈະເອີ້ນພວກ
ເຈົ້າວ່າຜູ້ມີຄວາມສຸກ, ເພາະດິນແດນຂອງ
ພວກເຈົ້າຈະເປັນທີ່ຢູ່ອາໄສຢ່າງຜາສຸກ,
ຈອມໂຍທາໄດ້ກ່າວ.
13 ພວກເຈົ້າໄດ້ເວົ້າຈາໃສ່ຮ້າຍເຮົາ,
ພຣະຜູ້ເປັນເຈົ້າໄດ້ກ່າວ. ແຕ່ພວກເຈົ້າ
ຖາມວ່າ: ພວກຂ້າພຣະອົງໄດ້ເວົ້າຈາໃສ່
ຮ້າຍຫຍັງແດ່ແກ່ພຣະອົງ?
14 ພວກເຈົ້າໄດ້ເວົ້າວ່າ: ຮັບໃຊ້ພຣະ
ເຈົ້ານັ້ນບໍ່ມີປະໂຫຍດ, ແລະ ມີປະໂຫຍດ
ຫຍັງທີ່ຈະປະຕິບັດຕາມ ພິທີການຕ່າງໆ
ຂອງພຣະອົງ ແລະ ເສຍໃຈຕໍ່ສິ່ງທີ່ພວກ
ເຮົາໄດ້ເຮັດມາຕໍ່ພຣະພັກຂອງຈອມ
ໂຍທາ?
15 ແລະ ບັດນີ້ພວກເຮົາເອີ້ນຄົນອວດ
ດີວ່າຄົນມີຄວາມສຸກ; ແທ້ຈິງແລ້ວ, ຄົນທີ່
ເຮັດຄວາມຊົ່ວຮ້າຍວ່າສູງສົ່ງ; ແທ້ຈິງແລ້ວ,
ວ່າແຕ່ຄົນທີ່ດລອງພຣະເຈົ້າກໍບໍ່ໄດ້ຮັບ
ໂທດຫຍັງເລີຍ.
16 ແລ້ວຄົນທີ່ຢຳເກງພຣະຜູ້ເປັນເຈົ້າໄດ້
[ກ]ເວົ້າກັນເລື້ອຍໆ, ແລະ ພຣະຜູ້ເປັນເຈົ້າ
ໄດ້ຮັບຟັງ ແລະ ໄດ້ຍິນ; ແລະ ຢູ່ຕໍ່ພຣະ
ພັກຂອງພຣະອົງ ມີ [ຂ]ໜັງສືແຫ່ງຄວາມຊົງ
ຈຳເຫລັ້ມໜຶ່ງທີ່ບັນທຶກລາຍຊື່ຂອງຄົນທີ່
ຢຳເກງພຣະຜູ້ເປັນເຈົ້າໄວ້, ແລະ ເຄົາລົບ
ພຣະນາມຂອງພຣະອົງ.
17 ພວກ ເຂົາຈະເປັນຜູ້ຄົນຂອງເຮົາ,
ຈອມໂຍທາໄດ້ກ່າວ, ໃນມື້ນັ້ນເມື່ອເຮົາ
[ກ]ຮວບຮວມເຄື່ອງເພັດຂອງເຮົາ; ແລະ ເຮົາ

5 *ກ* ຢກບ 1:27.
7 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຂ* ຮລມ 13:11; 3 ນຟ 10:6; ມຣນ 9:22.
8 *ກ* ຄມພ ສ່ວນສິບ, ເງິນສ່ວນສິບ.
*ຂ* ຄມພ ເຄື່ອງຖວາຍ.
10 *ກ* ຄພ 64:23; 119.
*ຂ* ຄມພ ພອນ, ໃຫ້ພອນ, ເປັນພອນ.
16 *ກ* ມຣນ 6:5.
*ຂ* ຄພ 85:9; ມຊ 6:5. ຄມພ ປຶ້ມແຫ່ງຄວາມຊົງຈຳ.
17 *ກ* ຄພ 101:3.

ຈະລະເວັ້ນມັນ ດັ່ງມະນຸດລະເວັ້ນບຸດຂອງ
ຕົນ ທີ່ຮັບໃຊ້ຕົນ.
18 ເມື່ອນັ້ນເຈົ້າຈະກັບມາ ແລະ [ກ]ຫລິງ
ເຫັນຄວາມແຕກຕ່າງລະຫວ່າງຄົນຊອບ
ທຳ ແລະ ຄົນຊົ່ວ, ລະຫວ່າງຜູ້ຮັບໃຊ້ພຣະ
ເຈົ້າ ແລະ ຜູ້ທີ່ບໍ່ຮັບໃຊ້ພຣະອົງ.

## ບົດທີ 25

*ໃນການສະເດັດມາຄັ້ງທີສອງ, ຄົນອວດດີ ແລະ ຄົນຊົ່ວຈະຖືກເຜົາຄືກັນກັບເຟືອງເຂົ້າ—ເອລີຢາຈະກັບຄືນມາກ່ອນມື້ອັນຍິ່ງໃຫຍ່ ແລະ ໜ້າຢ້ານກົວນັ້ນ—ປຽບທຽບກັບ ມາລາກີ 4. ປະມານ ຄ.ສ. 34.*

1 ເພາະຈົ່ງເບິ່ງ, ມື້ນັ້ນຍ່ອມມາເຖິງເມື່ອ
ຈະ [ກ]ໄໝ້ດັ່ງເຕົາໄຟ; ແລະ [ຂ]ຄົນອວດດີທັງ
ໝົດ, ແທ້ຈິງແລ້ວ, ຄົນທັງໝົດທີ່ເຮັດຄວາມ
ຊົ່ວຮ້າຍຈະເປັນຄືກັນກັບເຟືອງເຂົ້າ; ແລະ
ເມື່ອວັນນັ້ນມາເຖິງ ມັນຈະໄໝ້ພວກເຂົາ
ຈົນບໍ່ມີຫຍັງເຫລືອ, ຈອມໂຍທາໄດ້ກ່າວ,
ແລະ ມັນຈະບໍ່ເຫລືອທັງຮາກ ຫລື ກິ່ງໃຫ້
ພວກເຂົາເລີຍ.
2 ແຕ່ສຳລັບເຈົ້າທີ່ຢຳເກງນາມຂອງເຮົາ,
[ກ]ພຣະບຸດແຫ່ງຄວາມຊອບທຳຈະລຸກຂຶ້ນ
ດ້ວຍປີກຂອງພຣະອົງທີ່ປິ່ນປົວ, ແລະ ເຈົ້າ
ຈະອອກໄປ ແລະ [ຂ]ເຕີບໂຕຂຶ້ນ ດັ່ງ [ຄ]ລູກງົວ
ໃນຄອກ.
3 ແລະ ເຈົ້າຈະ [ກ]ຢຽບຢ່ຳຄົນຊົ່ວ; ເພາະ
ພວກເຂົາຈະເປັນດັ່ງຂີ້ຝຸ່ນທີ່ຢູ່ໃຕ້ສົ້ນຕີນ
ຂອງເຈົ້າ ໃນມື້ທີ່ເຮົາຈະດຳເນີນການນີ້,
ຈອມໂຍທາໄດ້ກ່າວ.
4 ຈົ່ງຈື່ຈຳກົດຂອງໂມເຊຜູ້ຮັບໃຊ້ຂອງ
ເຮົາ, ພ້ອມທັງຂໍ້ກຳນົດ ແລະ ການພິ
ພາກສາຊຶ່ງເຮົາໄດ້ມອບໃຫ້ແກ່ລາວທີ່ພູ
[ກ]ໂຮເຣັບສຳລັບຊາວອິດສະຣາເອນທຸກ
ຄົນ.
5 ຈົ່ງເບິ່ງ, ເຮົາຈະສົ່ງສາດສະດາ [ກ]ເອລີ
ຢາ ມາຫາເຈົ້າກ່ອນການມາຂອງ [ຂ]ວັນອັນ
ໜ້າຢ້ານກົວ ແລະ ສຳຄັນຍິ່ງຂອງພຣະຜູ້
ເປັນເຈົ້າ;
6 ແລະ ລາວຈະ [ກ]ຫັນໃຈພໍ່ມາຫາລູກ,
ແລະ ຫັນໃຈລູກໄປຫາພໍ່, ບໍ່ດັ່ງນັ້ນ ເຮົາຈະ
ມາ ແລະ ທຳລາຍແຜ່ນດິນໂລກດ້ວຍຄຳ
ສາບແຊ່ງ.

## ບົດທີ 26

*ພຣະເຢຊູຊີ້ແຈງທັງໝົດນັບຕັ້ງແຕ່ຕົ້ນຈົນເຖິງມື້ສຸດທ້າຍ—ເດັກແດງທາລົກ ແລະ ເດັກນ້ອຍເວົ້າເລື່ອງມະຫັດສະຈັນທີ່ບໍ່ອາດສາມາດຂຽນໄວ້ໄດ້—ຜູ້ທີ່ເຂົ້າຮ່ວມສາດສະໜາຈັກຂອງພຣະຄຣິດຖືວ່າສິ່ງຂອງທັງໝົດທີ່ພວກເຂົາມີເປັນຂອງສ່ວນລວມ. ປະມານ ຄ.ສ. 34.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ເມື່ອພຣະເຢຊູເລົ່າເລື່ອງເຫລົ່ານີ້ແລ້ວ ພຣະ

---

18 *ກ* ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
**25** 1 *ກ* ອຊຢ 24:6; 1 ນຟ 22:15; 3 ນຟ 24:2; ຄພ 29:9; 64:23–24; 133:64; ຈສ—ປ 1:37. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
*ຂ* 2 ນຟ 20:33. ຄມພ ຈອງຫອງ, ຄວາມຈອງຫອງ.
2 *ກ* ອທ 9:22.
*ຂ* ຄພ 45:58.
*ຄ* ອມ 6:4; 1 ນຟ 22:24.
3 *ກ* 3 ນຟ 21:12.
4 *ກ* ອພຍ 3:1–6.
5 *ກ* 2 ກສ 2:1–2; ຄພ 2:1; 110:13–16; 128:17–18. ຄມພ ຄວາມລອດສຳລັບຄົນຕາຍ; ຜະນຶກ, ການຜະນຶກ; ເອລີຢາ.
*ຂ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
6 *ກ* ຄພ 2:2.

ອົງ ຈຶ່ງ ໄດ້ ຊີ້ ແຈງ ເລື່ອງ ເຫລົ່າ ນີ້ ຕໍ່ ຝູງ ຊົນ;
ແລະ ພຣະ ອົງ ໄດ້ ຊີ້ ແຈງ ເລື່ອງທັງ ໝົດ ຕໍ່
ພວກເຂົາ, ທັງເລື່ອງໃຫຍ່ ແລະ ເລື່ອງນ້ອຍ.
2 ແລະ ພຣະອົງໄດ້ກ່າວວ່າ: [ກ]ພຣະຄຳ
ພີເຫລົ່ານີ້ ຊຶ່ງພວກເຈົ້າບໍ່ໄດ້ມີຢູ່ນຳ, ພຣະ
ບິດາ ຈຶ່ງ ໄດ້ ບັນ ຊາ ໃຫ້ ເຮົາ ມອບ ໃຫ້ແກ່
ພວກເຈົ້າ; ເພາະມັນເປັນຄວາມສະຫລຽວ
ສະຫລາດຂອງພຣະອົງທີ່ມັນຄວນຖືກສົ່ງຕໍ່
ໄປໃຫ້ຜູ້ຄົນລຸ້ນຫລັງ.
3 ແລະ ພຣະອົງໄດ້ຊີ້ແຈງເລື່ອງທັງໝົດ
ຕັ້ງແຕ່ຕົ້ນຈົນເຖິງເວລາທີ່ພຣະອົງຈະສະ
ເດັດ ມາ ໃນ [ກ]ລັດ ສະ ໝີ ພາບ ຂອງພຣະ
ອົງ—ແທ້ຈິງແລ້ວ, ຈົນກະທັ້ງທຸກເລື່ອງທີ່
ຈະ ເກີດຂຶ້ນໃນຜືນ ແຜ່ນດິນ ໂລກ, ຈົນກະ
ທັ້ງ [ຂ]ວັດຖຸຕ່າງໆເປື່ອຍໄປດ້ວຍໄຟ, ແລະ
ແຜ່ນ ດິນ ໂລກ ຈະ [ຄ]ຫົດເຂົ້າດັ່ງມ້ວນກະ
ດາດ, ແລະ ຟ້າສະຫວັນກັບແຜ່ນດິນກໍຈະ
ລ່ວງພົ້ນໄປ;
4 ແລະ ຈົນກະທັ້ງເປັນວັນ [ກ]ອັນຍິ່ງໃຫຍ່
ແລະ ສຸດທ້າຍ, ເມື່ອທຸກຜູ້ຄົນ, ແລະ ທຸກ
ຕະກຸນ, ແລະ ທຸກປະຊາຊາດ, ແລະ ທຸກ
ພາສາ ຈະມາ [ຂ]ຢືນຢູ່ຕໍ່ພຣະພັກຂອງພຣະ
ເຈົ້າ, ເພື່ອຮັບການພິພາກສາ, ຕາມວຽກ
ງານຂອງພວກເຂົາ ບໍ່ວ່າຈະເປັນວຽກງານ
ດີ ຫລື ວຽກງານຊົ່ວ—
5 ຖ້າຫາກມັນເປັນວຽກງານດີ, ກໍຈະໄດ້
ອອກ ມາ ຫາ [ກ]ການ ຟື້ນ ຄືນ ຊີວິດອັນເປັນ
ນິດ; ແລະ ຖ້າຫາກມັນເປັນວຽກງານຊົ່ວ,
ກໍຈະໄດ້ອອກມາຫາການຟື້ນຄືນຊີວິດທີ່
ອັບປະໂຫຍດ; ໂດຍເປັນທາງສອງເສັ້ນ
ຄຽງຄູ່ກັນໄປ, ເສັ້ນໜຶ່ງຢູ່ນີ້ເບື້ອງໜຶ່ງ ແລະ
ອີກເສັ້ນໜຶ່ງຢູ່ນີ້ອີກເບື້ອງໜຶ່ງ, ອີງຕາມ
ພຣະເມດຕາ, ແລະ ຕາມ [ຂ]ຄວາມຍຸດຕິ
ທຳ, ແລະ ຕາມຄວາມບໍລິສຸດຊຶ່ງມີໃນພຣະ
ຄຣິດ, ຜູ້ຊຶ່ງເປັນຢູ່ມາ [ຄ]ກ່ອນໂລກເລີ່ມຕົ້ນ.
6 ແລະ ບັດນີ້ບໍ່ອາດຂຽນມັນໄວ້ໃນໜັງ
ສືເຫລັ້ມນີ້ໄດ້ເຖິງແມ່ນໃນ [ກ]ໜຶ່ງສ່ວນຮ້ອຍ
ຂອງເລື່ອງຊຶ່ງພຣະເຢຊູໄດ້ສິດສອນໄວ້
ແທ້ໆແກ່ຜູ້ຄົນ;
7 ແຕ່ຈົ່ງເບິ່ງ [ກ]ແຜ່ນຈາລຶກຂອງນີໄຟໄດ້
ບັນຈຸຫລາຍກວ່ານີ້ຂອງເລື່ອງຊຶ່ງພຣະອົງ
ໄດ້ສິດສອນຜູ້ຄົນ.
8 ແລະ ສິ່ງເຫລົ່ານີ້ຂ້າພະເຈົ້າໄດ້ຂຽນໄວ້
ຊຶ່ງເປັນພຽງສ່ວນເລັກໜ້ອຍຂອງເລື່ອງທັງ
ໝົດທີ່ພຣະອົງໄດ້ສິດສອນຜູ້ຄົນ; ແລະ ຂ້າ
ພະເຈົ້າຂຽນມັນໄວ້ໂດຍມີເຈດຕະນາວ່າ
ມັນອາດຈະຖືກນຳມາສູ່ຜູ້ຄົນພວກນີ້ອີກ
[ກ]ຈາກຄົນຕ່າງຊາດຕາມພຣະຄຳທີ່ພຣະ
ເຢຊູໄດ້ກ່າວໄວ້.
9 ແລະ ເມື່ອພວກເຂົາໄດ້ຮັບເລື່ອງນີ້
ແລ້ວ, ຊຶ່ງສົມຄວນທີ່ພວກເຂົາຈະໄດ້ຮັບ
ມັນກ່ອນ, ເພື່ອທົດລອງສັດທາຂອງພວກ
ເຂົາ, ແລະ ຖ້າຫາກເປັນໄປວ່າ ພວກເຂົາ
ເຊື່ອເລື່ອງເຫລົ່ານີ້ ເມື່ອນັ້ນ [ກ]ເລື່ອງທີ່ຍິ່ງ
ໃຫຍ່ຈະສະແດງໃຫ້ປະຈັກແກ່ພວກເຂົາ.
10 ແລະ ຖ້າຫາກເປັນໄປວ່າ ພວກເຂົາ

**26** 2 *ກ* ອສ ມລກ 3–4, ຖືກອ້າງ ເຖິງ ໃນ 3 ນຟ 24–25.
3 *ກ* ຄມພ ພຣະເຢຊູຄຣິດ—ລັດສະໝີພາບຂອງພຣະເຢຊູຄຣິດ.
*ຂ* ອມ 9:13; 2 ປຕ 3:10, 12; ມມ 9:2. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ; ໂລກ—ທີ່ສຸດຂອງໂລກ.
*ຄ* ມມ 5:23.
4 *ກ* ຮລມ 12:25; 3 ນຟ 28:31.
*ຂ* ມຊຢ 16:10–11. ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
5 *ກ* ດນອ 12:2; ຢຮ 5:29.
*ຂ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຄ* ອທ 3:14. ຄມພ ພຣະເຢຊູຄຣິດ—ການເປັນຢູ່ຂອງພຣະຄຣິດກ່ອນມະຕະ.
6 *ກ* ຢຮ 21:25; 3 ນຟ 5:8.
7 *ກ* ຄມພ ແຜ່ນຈາລຶກ.
8 *ກ* 3 ນຟ 21:5–6.
9 *ກ* ອທ 4:4–10.

ບໍ່ ເຊື່ອ ເລື່ອງ ເຫລົ່ານີ້, ເມື່ອນັ້ນ ເລື່ອງທີ່ຍິ່ງ
ໃຫຍ່ກວ່ານີ້ຈະຖືກ [ກ]ກີດກັນໄວ້ຈາກພວກ
ເຂົາ, ຊຶ່ງນຳໄປສູ່ການກ່າວໂທດພວກເຂົາ.
11 ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ ກຳລັງ ຈະ ຂຽນ
ເລື່ອງທັງໝົດທີ່ບັນທຶກຢູ່ໃນແຜ່ນຈາລຶກ
ຂອງນີໄຟຢູ່ພໍດີ, ແຕ່ພຣະຜູ້ເປັນເຈົ້າໄດ້
ຫ້າມໄວ້ ແລະ ກ່າວວ່າ: ເຮົາຈະ [ກ]ທົດລອງ
ສັດທາຂອງຜູ້ຄົນຂອງເຮົາ.
12 ສະນັ້ນ ຂ້າພະ ເຈົ້າ ມໍມອນ ຈຶ່ງ ຂຽນ
ເລື່ອງທີ່ພຣະຜູ້ເປັນເຈົ້າບັນຊາຂ້າພະເຈົ້າ
ເທົ່ານັ້ນ. ແລະ ບັດນີ້ຂ້າພະເຈົ້າ, ມໍມອນ
ຈົບຂໍ້ຄວາມຂອງຂ້າພະເຈົ້າ, ແລະ ຕໍ່ໄປ
ນີ້ຂ້າພະເຈົ້າຈະເລີ່ມຂຽນເລື່ອງຊຶ່ງຂ້າພະ
ເຈົ້າໄດ້ຮັບບັນຊາ.
13 ສະນັ້ນ, ຂ້າ ພະ ເຈົ້າ ຢາກ ໃຫ້ ທ່ານ
ເຫັນວ່າ ພຣະເຈົ້າໄດ້ສິດສອນຜູ້ຄົນໂດຍ
ແທ້ເປັນເວລາສາມມື້, ແລະ ຫລັງຈາກນັ້ນ
ພຣະອົງໄດ້ມາ [ກ]ປະກົດຕໍ່ພວກເຂົາເປັນ
ບາງຄັ້ງບາງຄາວ, ແລະ ໄດ້ຫັກ [ຂ]ເຂົ້າຈີ່
ເປັນບາງຄັ້ງບາງຄາວ, ແລະ ໃຫ້ພອນແກ່
ມັນ, ແລະ ໄດ້ມອບມັນໃຫ້ແກ່ພວກເຂົາ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະອົງໄດ້ສິດສອນ ແລະ ປະຕິບັດສາດ
ສະໜາກິດແກ່ [ກ]ເດັກນ້ອຍຂອງຝູງຊົນຊຶ່ງ
ໄດ້ກ່າວມາແລ້ວ, ແລະ ພຣະອົງໄດ້ [ຂ]ມາຍ
ລີ້ນຂອງພວກເຂົາ, ແລະ ພວກເຂົາໄດ້ເວົ້າ
ເລື່ອງອັນຍິ່ງໃຫຍ່ ແລະ ໜ້າອັດສະຈັນກັບ
ພໍ່ຂອງພວກເຂົາ, ແມ່ນແຕ່ຍິ່ງໃຫຍ່ກວ່າສິ່ງ
ທີ່ພຣະອົງໄດ້ເປີດເຜີຍກັບຜູ້ຄົນມາແລ້ວ;
ແລະ ພຣະອົງໄດ້ມາຍລີ້ນຂອງພວກເຂົາ
ເພື່ອພວກເຂົາຈະເວົ້າອອກມາໄດ້.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກທີ່ພຣະອົງໄດ້ສະເດັດຂຶ້ນສະຫວັນ—
ເທື່ອທີສອງທີ່ພຣະອົງໄດ້ປະກົດຕົວຕໍ່ພວກ
ເຂົາ, ແລະ ໄດ້ກັບຂຶ້ນໄປຫາພຣະບິດາ,
ຫລັງຈາກໄດ້ [ກ]ປິ່ນປົວຄົນເຈັບປ່ວຍ ແລະ
ຄົນເປ້ຍລ່ອຍທັງໝົດ, ແລະ ໄດ້ເປີດຕາ
ໃຫ້ຄົນຕາບອດ ແລະ ໄດ້ເປີດຫູໃຫ້ຄົນຫູ
ໜວກ, ແລະ ເຖິງຂະໜາດທີ່ໄດ້ປິ່ນປົວ
ພະຍາດນາໆປະການໃນບັນດາພວກເຂົາ,
ແລະ ໄດ້ໂຜດຍົກຊາຍຄົນໜຶ່ງຄືນຈາກ
ຕາຍ, ແລະ ໄດ້ສະແດງອຳນາດຂອງພຣະ
ອົງໃຫ້ພວກເຂົາເຫັນ, ແລ້ວໄດ້ສະເດັດຂຶ້ນ
ໄປເຝົ້າພຣະບິດາ—
16 ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນໃນ
ມື້ຕໍ່ມາຄື ຝູງຊົນໄດ້ມາເຕົ້າໂຮມກັນ, ແລະ
ພວກເຂົາທັງໄດ້ເຫັນ ແລະ ໄດ້ຍິນ [ກ]ເດັກ
ນ້ອຍເຫລົ່ານີ້; ແທ້ຈິງແລ້ວ, ເຖິງຂະໜາດ
ເດັກແດງທາລົກກໍໄດ້ເປີດປາກເວົ້າເລື່ອງ
ໜ້າອັດສະຈັນອອກມາ; ແລະ ເລື່ອງທີ່
ພວກເຂົາໄດ້ເວົ້າອອກມານັ້ນຖືກຫ້າມບໍ່ໃຫ້
ຜູ້ໃດຂຽນໄວ້.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື [ກ]ສາ
ນຸສິດຜູ້ຊຶ່ງພຣະເຢຊູໄດ້ເລືອກໄວ້ໄດ້ເລີ່ມ
ຕົ້ນ [ຂ]ບັບຕິສະມາ ແລະ ສິດສອນຫລາຍ
ຕໍ່ຫລາຍຄົນທີ່ໄດ້ມາຫາພວກເພິ່ນຕັ້ງແຕ່
ເວລານັ້ນໄປ; ແລະ ຫລາຍຕໍ່ຫລາຍຄົນທີ່
ໄດ້ຮັບບັບຕິສະມາໃນພຣະນາມຂອງພຣະ
ເຢຊູກໍເຕັມໄປດ້ວຍພຣະວິນຍານບໍລິສຸດ.
18 ແລະ ຫລາຍຄົນໃນບັນດາພວກເຂົາ
ໄດ້ເຫັນ ແລະ ໄດ້ຍິນເລື່ອງຊຶ່ງບໍ່ອາດຈະ
ເວົ້າໄດ້, ຊຶ່ງມັນ [ກ]ຖືກຫ້າມບໍ່ໃຫ້ຂຽນໄວ້.

10 *ກ* ແອວ 12:9–11.
11 *ກ* ອທ 12:6.
13 *ກ* ຢຮ 21:14.
*ຂ* 3 ນຟ 20:3–9. ຄມພ ສິນລະລຶກ.
14 *ກ* 3 ນຟ 17:11–12.
*ຂ* ແອວ 32:23; 3 ນຟ 26:16.
15 *ກ* 3 ນຟ 17:9. ຄມພ ປິ່ນປົວ, ການປິ່ນປົວ; ມະຫັດສະຈັນ, ການມະຫັດສະຈັນ.
16 *ກ* ມທ 11:25.
17 *ກ* 3 ນຟ 19:4–13.
*ຂ* 4 ນຟ 1:1.
18 *ກ* 3 ນຟ 26:11.

19 ແລະ ພວກເຂົາໄດ້ສິດສອນ, ແລະ
ໄດ້ປະຕິບັດສາດສະໜາກິດແກ່ກັນແລະ
ກັນ; ແລະ ພວກເຂົາຖືວ່າ ສິ່ງຂອງ [ກ]ທັງ
ໝົດທີ່ພວກເຂົາມີ [ຂ]ເປັນຂອງສ່ວນລວມ,
ທຸກຄົນປະຕິບັດຕໍ່ກັນຢ່າງທ່ຽງທຳ.
20 ແລະ ເຫດການ ໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ເຮັດທຸກສິ່ງທຸກຢ່າງດັ່ງທີ່ພຣະ
ເຢຊູໄດ້ບັນຊາພວກເຂົາ.
21 ແລະ ຜູ້ທີ່ໄດ້ຮັບບັບຕິສະມາໃນພຣະ
ນາມຂອງພຣະເຢຊູຖືກເອີ້ນວ່າ [ກ]ສາດສະ
ໜາຈັກຂອງພຣະຄຣິດ.

## ບົດທີ 27

*ພຣະເຢຊູບັນຊາໃຫ້ພວກເຂົາເອີ້ນສາດສະໜາຈັກຕາມພຣະນາມຂອງພຣະອົງ—ພາລະກິດ ແລະ ການເສຍສະລະຊີວິດໃຊ້ຂອງພຣະອົງປະກອບເປັນພຣະກິດຕິຄຸນຂອງພຣະອົງ—ມະນຸດຖືກບັນຊາໃຫ້ກັບໃຈ ແລະ ຮັບບັບຕິສະມາ ເພື່ອພວກເຂົາຈະໄດ້ຮັບການຊຳລະໃຫ້ບໍລິສຸດ ໂດຍພຣະວິນຍານບໍລິສຸດ—ພວກເຂົາຄວນເປັນດັ່ງທີ່ພຣະເຢຊູເປັນ. ປະມານ ຄ.ສ. 34–35.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ໄລຍະເວລາທີ່ສານຸສິດຂອງພຣະເຢຊູກຳ
ລັງເດີນທາງໄປສັ່ງສອນເລື່ອງທີ່ພວກເພິ່ນ
ໄດ້ຍິນ ແລະ ໄດ້ເຫັນມານັ້ນ, ແລະ ໄດ້ໃຫ້
ບັບຕິສະມາໃນພຣະນາມຂອງພຣະເຢຊູ,
ເຫດການໄດ້ບັງເກີດຂຶ້ນຄື ສານຸສິດໄດ້ມາ
[ກ]ເຕົ້າໂຮມກັນເພື່ອອະທິຖານ ແລະ [ຂ]ຖືສິນ
ອົດເຂົ້າຢ່າງເອົາຈິງເອົາຈັງ.
2 ແລະ ພຣະອົງໄດ້ສະເດັດມາ [ກ]ປະກົດ
ຕົວຕໍ່ພວກເພິ່ນອີກ, ເພາະພວກເພິ່ນໄດ້
ອະທິຖານຫາພຣະບິດາໃນພຣະນາມ
ຂອງພຣະອົງ, ແລະ ພຣະເຢຊູໄດ້ສະເດັດ
ມາຢືນຢູ່ທ່າມກາງພວກເພິ່ນ, ແລະ ຖາມ
ພວກເພິ່ນວ່າ: ເຈົ້າຕ້ອງການອັນໃດຈາກ
ເຮົາ?
3 ແລະ ພວກເພິ່ນໄດ້ກ່າວກັບພຣະອົງ
ວ່າ: ພຣະອົງເຈົ້າເອີຍ, ພວກຂ້ານ້ອຍຢາກ
ໃຫ້ພຣະອົງບອກພວກຂ້ານ້ອຍວ່າພວກຂ້າ
ນ້ອຍຄວນເອີ້ນຊື່ຂອງສາດສະໜາຈັກນີ້ວ່າ
ແນວໃດ ເພາະວ່າໄດ້ມີການໂຕ້ຖຽງກັນໃນ
ບັນດາຜູ້ຄົນກ່ຽວກັບເລື່ອງນີ້.
4 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບພວກ
ເພິ່ນວ່າ: ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າ, ເປັນດ້ວຍເຫດໃດຜູ້ຄົນຈຶ່ງຈົ່ມ
ແລະ ໂຕ້ຖຽງກັນເພາະເລື່ອງນີ້?
5 ພວກເຂົາບໍ່ໄດ້ອ່ານພຣະຄຳພີບໍ, ຊຶ່ງ
ມັນບອກໄວ້ວ່າ ເຈົ້າຕ້ອງຮັບເອົາ [ກ]ພຣະ
ນາມຂອງພຣະຄຣິດ, ຊຶ່ງເປັນນາມຂອງ
ເຮົາ? ເພາະໂດຍນາມນີ້ເຈົ້າຈະຖືກເອີ້ນໃນ
ວັນສຸດທ້າຍ;
6 ແລະ ຜູ້ໃດທີ່ຮັບນາມຂອງເຮົາ, ແລະ
[ກ]ອົດທົນຈົນເຖິງທີ່ສຸດ, ຜູ້ນັ້ນຈະລອດໃນ
ວັນສຸດທ້າຍ.
7 ສະນັ້ນ, ອັນໃດກໍຕາມທີ່ເຈົ້າຈະເຮັດ,
ຈົ່ງເຮັດໃນນາມຂອງເຮົາ; ສະນັ້ນ ເຈົ້າຈົ່ງ
ເອີ້ນສາດສະໜາຈັກຕາມນາມຂອງເຮົາ;
ແລະ ເຈົ້າຈົ່ງເອີ້ນຫາພຣະບິດາໃນນາມ
ຂອງເຮົາ ເພື່ອພຣະອົງຈະປະທານພອນ
ໃຫ້ແກ່ສາດສະໜາຈັກເພື່ອເຫັນແກ່ເຮົາ.

19 *ກ* 4 ນຟ 1:3.
*ຂ* ຄມພ ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.
21 *ກ* ມຊຢ 18:17.
ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
**27** 1 *ກ* ຄພ 29:6.
*ຂ* ແອວ 6:6.
ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
2 *ກ* 3 ນຟ 26:13.
ຄມພ ພຣະເຢຊູຄຣິດ—ການປະກົດຕົວຂອງພຣະຄຣິດຫລັງຈາກຊີວິດມະຕະ.
5 *ກ* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
6 *ກ* 3 ນຟ 15:9.

8 ແລະ ມັນ ຈະ ເປັນ [ກ]ສາດ ສະ ໜາ ຈັກ
[ຂ]ຂອງ ເຮົາ ໄດ້ ແນວ ໃດ ຖ້າ ຫາກ ມັນ ບໍ່ ມີ ຊື່
ຕາມນາມຂອງເຮົາ? ເພາະຖ້າ ຫາກ ສາດ
ສະໜາຈັກມີຊື່ຕາມຊື່ຂອງໂມເຊ, ແລ້ວມັນ
ກໍຈະເປັນສາດສະໜາຈັກຂອງໂມເຊ; ຫລື
ຖ້າຫາກມັນມີຊື່ຕາມຊື່ຂອງມະນຸດ, ມັນກໍ
ຈະເປັນສາດສະໜາຈັກຂອງມະນຸດ; ແຕ່
ຖ້າຫາກມັນມີຊື່ຕາມນາມຂອງເຮົາ, ມັນກໍ
ຈະເປັນສາດສະໜາຈັກຂອງເຮົາຖ້າຫາກ
ເປັນໄປວ່າມັນຖືກສ້າງເທິງພຣະກິດຕິຄຸນ
ຂອງເຮົາ.
9 ຕາມ ຈິງ ແລ້ວ ເຮົາ ກ່າວ ກັບ ເຈົ້າ, ວ່າ
ເຈົ້າຖືກສ້າງເທິງພຣະກິດຕິຄຸນຂອງເຮົາ;
ສະນັ້ນອັນໃດກໍຕາມທີ່ເຈົ້າ ຈະ ເອີ້ນ ເຈົ້າ
ຈົ່ງ ເອີ້ນ ຕາມ ນາມ ຂອງ ເຮົາ; ສະນັ້ນ ຖ້າ
ຫາກເຈົ້າເອີ້ນຫາພຣະບິດາເພື່ອສາດສະ
ໜາຈັກ, ແລະ ຖ້າຫາກມັນເປັນໄປໃນນາມ
ຂອງເຮົາ ພຣະບິດາຈະຮັບຟັງເຈົ້າ;
10 ແລະ ຖ້າ ຫາກ ເປັນໄປວ່າສາດສະ
ໜາຈັກຖືກສ້າງຂຶ້ນເທິງພຣະກິດຕິຄຸນຂອງ
ເຮົາ ແລ້ວພຣະບິດາຈະສະແດງວຽກງານ
ຂອງພຣະອົງອອກມາໃນນັ້ນ.
11 ແຕ່ຖ້າຫາກມັນບໍ່ໄດ້ຖືກສ້າງຂຶ້ນເທິງ
ພຣະກິດຕິຄຸນຂອງເຮົາ, ແລະ ມັນຖືກສ້າງ
ຂຶ້ນ ເທິງ ວຽກງານ ຂອງມະນຸດ, ຫລື ເທິງ
ວຽກງານຂອງມານ, ຕາມຈິງແລ້ວເຮົາກ່າວ
ກັບເຈົ້າ ພວກເຂົາຈະມີຄວາມສຸກໃນວຽກ
ງານຂອງພວກເຂົາພຽງຊົ່ວໄລຍະໜຶ່ງເທົ່າ
ນັ້ນ, ແລະ ໃນບໍ່ຊ້າເວລາສຸດທ້າຍຍ່ອມ
ມາເຖິງ, ແລະ ພວກເຂົາຈະຖືກ [ກ]ໂຄ່ນລົງ
ແລະ ໂຍນເຂົ້າກອງໄຟ, ຊຶ່ງຈາກບ່ອນນັ້ນ
ຈະບໍ່ມີທາງຫວນກັບຄືນໄດ້.
12 ເພາະວ່າວຽກງານຂອງພວກເຂົາຈະ
[ກ]ຕິດຕາມພວກເຂົາ, ເປັນຍ້ອນວຽກງານ
ຂອງພວກເຂົາທີ່ພວກເຂົາຖືກໂຄ່ນລົງ;
ສະນັ້ນ ຈົ່ງຈື່ຈຳສິ່ງທີ່ເຮົາໄດ້ບອກເຈົ້າ.
13 ຈົ່ງເບິ່ງ ເຮົາໄດ້ມອບ [ກ]ພຣະກິດຕິຄຸນ
ຂອງເຮົາໃຫ້ແກ່ເຈົ້າ, ແລະ ນີ້ຄືພຣະກິດຕິ
ຄຸນຊຶ່ງເຮົາໄດ້ມອບໃຫ້ແກ່ເຈົ້າ—ຄືເຮົາໄດ້
ມາເກີດໃນໂລກເພື່ອກະທຳຕາມ [ຂ]ພຣະ
ປະສົງຂອງພຣະບິດາຂອງເຮົາ, ເພາະວ່າ
ພຣະບິດາຂອງເຮົາໄດ້ສົ່ງເຮົາມາ.
14 ແລະ ພຣະບິດາຂອງເຮົາໄດ້ສົ່ງເຮົາ
ມາເພື່ອວ່າເຮົາຈະໄດ້ຖືກ [ກ]ຍົກຂຶ້ນເທິງໄມ້
ກາງແຂນ; ແລະ ຫລັງຈາກເຮົາໄດ້ຖືກຍົກ
ຂຶ້ນເທິງໄມ້ກາງແຂນ ເພື່ອວ່າເຮົາຈະໄດ້
[ຂ]ຊັກນຳຄົນທັງຫລາຍມາຫາເຮົາ, ດັ່ງທີ່ເຮົາ
ໄດ້ຖືກຍົກຂຶ້ນໂດຍມະນຸດສັນໃດ ມະນຸດ
ກໍຈະໄດ້ຖືກຍົກຂຶ້ນໂດຍພຣະບິດາສັນນັ້ນ,
ເພື່ອພວກເຂົາຈະໄດ້ມາຢືນຢູ່ຕໍ່ພຣະພັກ
ຂອງເຮົາ ເພື່ອຮັບ [ຄ]ການພິພາກສາຕາມ
ວຽກງານຂອງພວກເຂົາ, ບໍ່ວ່າຈະເປັນວຽກ
ງານດີ ຫລື ວຽກງານຊົ່ວ—
15 ແລະ ເປັນດ້ວຍເຫດນີ້ ເຮົາຈຶ່ງຖືກ
[ກ]ຍົກຂຶ້ນ; ສະນັ້ນ ຕາມອຳນາດຂອງພຣະ
ບິດາ, ເຮົາຈຶ່ງຈະຊັກນຳຄົນທັງຫລາຍມາ
ຫາເຮົາ, ເພື່ອພວກເຂົາຈະໄດ້ຮັບການພິ
ພາກສາຕາມວຽກງານຂອງພວກເຂົາ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ໃດກໍຕາມທີ່ [ກ]ກັບໃຈ ແລະ [ຂ]ຮັບບັບຕິ

---

8 *ກ* ຄມພ ພຣະເຢຊູຄຣິດ—ປະມຸກຂອງສາດສະໜາຈັກ.
*ຂ* ຄພ 115:4.
11 *ກ* ແອວ 5:52.
12 *ກ* ພນມ 14:13; ຄພ 59:2.
13 *ກ* ຄພ 76:40–42. ຄມພ ພຣະກິດຕິຄຸນ.
*ຂ* ຢຮ 6:38–39.
14 *ກ* 1 ນຟ 11:32–33; ມຊ 7:55.
*ຂ* ຢຮ 6:44; 2 ນຟ 9:5; ຄພ 27:18.
*ຄ* ຄມພ ພຣະເຢຊູຄຣິດ—ພິພາກສາ.
15 *ກ* ຄມພ ຊົດໃຊ້, ການຊົດໃຊ້.
16 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.

ສະມາໃນນາມຂອງເຮົາ ຜູ້ນັ້ນຈະເຕັມປ່ຽມ;
ແລະ ຖ້າຫາກເຂົາ [ຄ]ອົດທົນຈົນເຖິງທີ່ສຸດ,
ຈົ່ງເບິ່ງ, ເຮົາຈະຖືວ່າເຂົາບໍ່ມີຄວາມຜິດຕໍ່
ພຣະພັກຂອງພຣະບິດາຂອງເຮົາໃນມື້ນັ້ນ
ທີ່ເຮົາຈະຢືນຂຶ້ນເພື່ອພິພາກສາໂລກ.
17 ແລະ ຜູ້ທີ່ບໍ່ອົດທົນຈົນເຖິງທີ່ສຸດ, ຜູ້
ນັ້ນກໍຈະເປັນຜູ້ທີ່ຖືກໂຄ່ນລົງ ແລະ ໂຍນ
ເຂົ້າກອງໄຟ, ຊຶ່ງຈາກບ່ອນນັ້ນເຂົາຈະກັບ
ຄືນມາອີກບໍ່ໄດ້, ເພາະຄວາມ [ກ]ຍຸດຕິທຳ
ຂອງພຣະບິດາ.
18 ແລະ ນີ້ ຄື ພຣະ ຄຳ ທີ່ ພຣະ ອົງ ໄດ້
ປະທານ ໃຫ້ ແກ່ ລູກຫລານ ມະນຸດ. ແລະ
ເພາະດ້ວຍເຫດນີ້ ພຣະອົງຈຶ່ງໄດ້ເຮັດໃຫ້
ພຣະຄຳ ຊຶ່ງພຣະອົງໄດ້ກ່າວໄວ້ສຳເລັດ,
ແລະ ພຣະອົງບໍ່ໄດ້ເວົ້າຕົວະ, ແຕ່ໄດ້ເຮັດ
ໃຫ້ພຣະຄຳຂອງພຣະອົງສຳເລັດທັງໝົດ.
19 ແລະ [ກ]ສິ່ງທີ່ບໍ່ສະອາດຈະບໍ່ສາມາດ
ເຂົ້າໄປໃນອານາຈັກຂອງພຣະອົງໄດ້;
ສະນັ້ນ ຈະບໍ່ມີສິ່ງໃດສາມາດເຂົ້າໄປໃນ
[ຂ]ທີ່ພັກຂອງພຣະອົງໄດ້ ນອກຈາກຜູ້ທີ່ໄດ້
[ຄ]ຊຳລະລ້າງອາພອນຂອງເຂົາໃຫ້ຂາວ
ສະອາດແລ້ວດ້ວຍເລືອດຂອງເຮົາ, ເພາະ
ສັດທາ ແລະ ການກັບໃຈຈາກບາບທັງໝົດ
ແລະ ຄວາມຊື່ສັດຈົນເຖິງທີ່ສຸດຂອງເຂົາ.
20 ບັດນີ້ ນີ້ຄືພຣະບັນຍັດ: ຈົ່ງ [ກ]ກັບໃຈ,
ເຈົ້າທັງຫລາຍຈົນເຖິງທີ່ສຸດຂອງແຜ່ນດິນ
ໂລກ, ແລະ ຈົ່ງມາຫາເຮົາ ແລະ [ຂ]ຮັບບັບຕິ
ສະມາໃນນາມຂອງເຮົາ, ເພື່ອເຈົ້າຈະໄດ້
ຮັບ [ຄ]ການຊຳລະໃຫ້ບໍລິສຸດ ໂດຍການຮັບ
ພຣະວິນຍານບໍລິສຸດ, ເພື່ອເຈົ້າຈະຢືນຢູ່
ໂດຍ [ງ]ບໍ່ມີມົນທິນຕໍ່ໜ້າເຮົາໃນວັນສຸດທ້າຍ.
21 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ນີ້ຄືພຣະກິດຕິຄຸນຂອງເຮົາ ແລະ ເຈົ້າ
ຮູ້ເຖິງສິ່ງທີ່ເຈົ້າຄວນຈະກະທຳໃນສາດສະ
ໜາຈັກຂອງເຮົາ; ເພາະວຽກງານທີ່ເຈົ້າ
ເຫັນເຮົາເຮັດມາແລ້ວ ສິ່ງນັ້ນເຈົ້າຈົ່ງເຮັດ
ຕາມເໝືອນກັນ; ເພາະສິ່ງໃດທີ່ເຈົ້າເຫັນ
ເຮົາເຮັດມາແລ້ວ ເຖິງແມ່ນສິ່ງນັ້ນເຈົ້າຈົ່ງ
ກະທຳ.
22 ສະນັ້ນ, ຖ້າຫາກເຈົ້າເຮັດສິ່ງເຫລົ່ານີ້
ເຈົ້າຍ່ອມເປັນສຸກ, ເພາະວ່າເຈົ້າຈະຖືກຍົກ
ຂຶ້ນໃນວັນສຸດທ້າຍ.
23 ຈົ່ງຂຽນເລື່ອງທີ່ເຈົ້າເຫັນ ແລະ ໄດ້
ຍິນມານັ້ນ, ນອກຈາກເລື່ອງທີ່ [ກ]ຖືກຫ້າມ
ໄວ້ເທົ່ານັ້ນ.
24 ຈົ່ງຂຽນວຽກງານຂອງຜູ້ຄົນພວກນີ້
ໄວ້, ຊຶ່ງມັນຈະເກີດຂຶ້ນ, ດັ່ງທີ່ມີຂຽນໄວ້ກ່ຽວ
ກັບເລື່ອງທີ່ເກີດຂຶ້ນແລ້ວ.
25 ເພາະຈົ່ງເບິ່ງ, ຈາກບັນດາໜັງສືທີ່ມີ
ຂຽນໄວ້ ແລະ ທີ່ຈະຂຽນ, ຜູ້ຄົນພວກນີ້ຈະ
ໄດ້ຮັບ [ກ]ການພິພາກສາ, ເພາະຕາມໜັງສື
ເຫລົ່ານັ້ນ [ຂ]ວຽກງານຂອງພວກເຂົາຈຶ່ງຈະ
ໄດ້ເປັນທີ່ຮູ້ຈັກແກ່ມວນມະນຸດ.
26 ແລະ ຈົ່ງເບິ່ງ, ທຸກສິ່ງໄດ້ຖືກ [ກ]ຂຽນ
ໄວ້ໂດຍພຣະບິດາ; ສະນັ້ນໂລກຈະໄດ້ຮັບ
ການພິພາກສາຈາກໜັງສືທີ່ຈະຂຽນ.
27 ແລະ ຈົ່ງຮູ້ໄວ້ວ່າ [ກ]ເຈົ້າຈະເປັນຜູ້ພິ
ພາກສາຂອງຜູ້ຄົນພວກນີ້, ຕາມການພິ

16 ຄ 1 ນຟ 13:37. ຄມພ ອົດທົນ, ຄວາມອົດທົນ.
17 ກ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
19 ກ ແອວ 11:37.
19 ຂ ຄພ 84:24. ຄມພ ພັກຜ່ອນ.
ຄ ພນມ 1:5; 7:14; ແອວ 5:21, 27; 13:11–13.
20 ກ ອທ 4:18.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ຈຳເປັນ.
ຄ ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
ງ ຄພ 4:2.
23 ກ 3 ນຟ 26:16.
25 ກ 2 ນຟ 33:10–15; ຄມ 1:11.
ຂ 1 ນຟ 15:32–33.
26 ກ 3 ນຟ 24:16. ຄມພ ໜັງສືທະບຽນແຫ່ງຊີວິດ.
27 ກ 1 ນຟ 12:9–10; ມມ 3:19.

ພາກສາຊຶ່ງເຮົາຈະມອບໃຫ້ແກ່ເຈົ້າ, ຊຶ່ງ
ຈະຍຸດຕິທຳ. ສະນັ້ນ ເຈົ້າ [ຂ]ຄວນເປັນຄົນ
ແນວໃດ? ຕາມຈິງແລ້ວ ເຮົາກ່າວກັບເຈົ້າ
ວ່າ ເຖິງແມ່ນ [ຄ]ດັ່ງທີ່ເຮົາເປັນ.
28 ແລະ ບັດນີ້ເຮົາ [ກ]ໄປເຝົ້າພຣະບິດາ.
ແລະ ຕາມຈິງແລ້ວເຮົາກ່າວກັບເຈົ້າ, ສິ່ງ
ໃດກໍຕາມທີ່ເຈົ້າຈະຂໍຈາກພຣະບິດາໃນ
ນາມຂອງເຮົາ ເຈົ້າຈະໄດ້ຮັບ.
29 ສະນັ້ນ, ຈົ່ງ [ກ]ໝັ່ນຂໍ, ແລ້ວເຈົ້າຈະໄດ້
ຮັບ; ຈົ່ງໝັ່ນເຄາະ, ແລ້ວຈະມີຄົນໄຂປະຕູ
ໃຫ້; ເພາະວ່າທຸກຄົນທີ່ໝັ່ນຂໍ ກໍໄດ້ຮັບ;
ແລະ ທຸກຄົນທີ່ໝັ່ນເຄາະ ກໍມີຄົນໄຂປະຕູ
ໃຫ້.
30 ແລະ ບັດນີ້, ຈົ່ງເບິ່ງຄວາມສຸກຂອງ
ເຮົາໃຫຍ່ຍິ່ງຈົນເຕັມບໍລິບູນເພາະເຈົ້າ,
ແລະ ເພາະຄົນລຸ້ນນີ້; ແທ້ຈິງແລ້ວ, ເຖິງ
ແມ່ນພຣະບິດາກໍປິຕິຍິນດີ ແລະ ເຫລົ່າ
ທູດທີ່ສັກສິດທັງຫລາຍນຳອີກ, ເພາະເຈົ້າ
ແລະ ຄົນລຸ້ນນີ້; ເພາະ [ກ]ບໍ່ມີຜູ້ໃດໃນພວກ
ເຂົາເສຍໄປ.
31 ຈົ່ງເບິ່ງ, ເຮົາຢາກໃຫ້ເຈົ້າເຂົ້າໃຈ;
ເພາະເຮົາໝາຍເຖິງຜູ້ [ກ]ຄົນລຸ້ນນີ້ທີ່ມີຊີວິດ
ຢູ່ [ຂ]ຕອນນີ້; ແລະ ບໍ່ມີຜູ້ໃດໃນພວກເຂົາ
ເສຍໄປ; ແລະ ເຮົາມີ [ຄ]ຄວາມສຸກຫລາຍ
ແທ້ໆນຳພວກເຂົາ.
32 ແຕ່ຈົ່ງເບິ່ງ, ມັນເຮັດໃຫ້ເຮົາເສົ້າສະ
ຫລົດໃຈເພາະຄົນລຸ້ນ [ກ]ທີສີ່ນັບຈາກຄົນ
ລຸ້ນນີ້ໄປຈະຖືກມານຈັບໄປເປັນຊະເລີຍ
ເຖິງແມ່ນດັ່ງບຸດແຫ່ງຄວາມຈິບຫາຍ;
ເພາະວ່າພວກເຂົາຈະຂາຍເຮົາເພື່ອເງິນ
ແລະ ເພື່ອຄຳ, ແລະ ເພື່ອສິ່ງທີ່ [ຂ]ມອດ
ແລະ ຂີ້ໝ້ຽງກັດກິນ ແລະ ເປັນບ່ອນທີ່ໂຈນ
ເຈາະເຂົ້າລັກເອົາໄດ້, ແລະ ໃນມື້ນັ້ນເຮົາ
ຈະມາຢ້ຽມຢາມພວກເຂົາຈົນເຖິງຂັ້ນທີ່ນຳ
ເອົາວຽກງານຂອງພວກເຂົາກັບມາໃສ່ຫົວ
ຂອງພວກເຂົາເອງ.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ຈົບຂໍ້ຄວາມນີ້ແລ້ວ ພຣະອົງ
ໄດ້ກ່າວກັບສານຸສິດຂອງພຣະອົງວ່າ: ຈົ່ງ
ເຂົ້າໄປທາງ [ກ]ປະຕູຄັບ; ເພາະປະຕູຄັບ,
ແລະ ທາງແຄບນັ້ນແຫລະທີ່ນຳໄປສູ່ຊີວິດ,
ແລະ ມີໜ້ອຍຄົນທີ່ຈະພົບເຫັນມັນ; ແຕ່ວ່າ
ປະຕູ ແລະ ທາງທີ່ນຳໄປຫາຄວາມຕາຍ
ນັ້ນກວ້າງຂວາງຫລາຍ ແລະ ມີຄົນເປັນ
ຈຳນວນຫລວງຫລາຍເດີນໄປທາງນັ້ນ, ຈົນ
ວ່າຕາເວັນຄ້ອຍຄ່ຳ, ແລ້ວພວກເຂົາກໍບໍ່
ອາດສາມາດເຮັດຫຍັງໄດ້.

## ບົດທີ 28

*ເກົ້າຄົນໃນສານຸສິດສິບສອງຄົນປາດຖະໜາ ແລະ ໄດ້ຮັບຄຳສັນຍາວ່າຈະໄດ້ຮັບມູນມໍລະດົກໃນອານາຈັກຂອງພຣະຄຣິດເວລາພວກເພິ່ນສິ້ນຊີວິດໄປ—ຊາວນີໄຟອີກສາມຄົນປາດຖະໜາ ແລະ ໄດ້ຮັບອຳນາດໃຫ້ພົ້ນຈາກຄວາມຕາຍ ເພື່ອວ່າພວກເພິ່ນຈະໄດ້ຢູ່ໃນແຜ່ນດິນໂລກຈົນກວ່າພຣະເຢຊູຈະສະເດັດມາອີກ—ພວກເພິ່ນໄດ້ປ່ຽນສະພາບ ແລະ ໄດ້ເຫັນສິ່ງທີ່ເອີ່ຍປາກບໍ່ໄດ້, ແລະ ໃນປະຈຸບັນນີ້ພວກ*

27 *ຂ* ຄນພ ພຣະເຢຊູຄຣິດ—ຕົວຢ່າງຂອງພຣະເຢຊູຄຣິດ.
*ຄ* ມທ 5:48; 3 ນຟ 12:48.
28 *ກ* ຢຮ 20:17.
29 *ກ* ມທ 7:7; 3 ນຟ 14:7.
30 *ກ* ຢຮ 17:12.
31 *ກ* 3 ນຟ 28:23.
*ຂ* 3 ນຟ 9:11–13; 10:12.
*ຄ* ຄນພ ຊື່ນຊົມ, ຄວາມຊື່ນຊົມ.
32 *ກ* 2 ນຟ 26:9–10; ແອວ 45:10, 12.
*ຂ* ມທ 6:19–21; 3 ນຟ 13:19–21.
33 *ກ* ມທ 7:13–14; 3 ນຟ 14:13–14; ຄພ 22.

*ເພິ່ນກໍຍັງປະຕິບັດສາດສະໜາກິດໃນທ່າມ
ກາງມະນຸດຢູ່. ປະມານ ຄ.ສ. 34–35.*

1 ແລະ ເຫດການໄດ້ບັງເກີດຂຶ້ນຫລັງ
ຈາກພຣະເຢຊູໄດ້ກ່າວຂໍ້ຄວາມນີ້, ພຣະ
ອົງໄດ້ເວົ້າກັບສານຸສິດຂອງພຣະອົງແຕ່ລະ
ຄົນ, ໂດຍກ່າວກັບພວກເພິ່ນວ່າ: ພວກເຈົ້າ
ປາດຖະໜາອັນໃດຈາກເຮົາ, ຫລັງຈາກ
ເຮົາໄປເຝົ້າພຣະບິດາ?
2 ແລະ ທັງໝົດນອກຈາກສາມຄົນໄດ້
ທູນວ່າ: ພວກຂ້ານ້ອຍປາດຖະໜາວ່າ
ຫລັງຈາກທີ່ພວກຂ້ານ້ອຍມີຊີວິດຢູ່ຈົນ
ຮອດສຸດອາຍຸຂອງມະນຸດ, ວ່າການປະຕິ
ບັດສາດສະໜາກິດຂອງພວກຂ້ານ້ອຍໄດ້
ເຖິງທີ່ສຸດແລ້ວ, ຊຶ່ງໃນການນັ້ນພຣະອົງໄດ້
ເອີ້ນພວກຂ້ານ້ອຍມາ, ຂໍໃຫ້ພວກຂ້ານ້ອຍ
ໄດ້ຂຶ້ນໄປເຝົ້າພຣະອົງໃນອານາຈັກຂອງ
ພຣະອົງໂດຍໄວດ້ວຍເທີ້ນ.
3 ແລະ ພຣະອົງໄດ້ກ່າວກັບພວກເພິ່ນ
ວ່າ: ພວກເຈົ້າເປັນສຸກແລ້ວ ເພາະວ່າພວກ
ເຈົ້າປາດຖະໜາສິ່ງນີ້ຈາກເຮົາ; ສະນັ້ນ,
ຫລັງຈາກທີ່ພວກເຈົ້າມີອາຍຸໄດ້ເຈັດສິບ
ສອງປີ ພວກເຈົ້າຈະໄດ້ໄປຫາເຮົາໃນອາ
ນາຈັກຂອງເຮົາ; ແລະ ພວກເຈົ້າຈະໄດ້
[ກ]ພັກຜ່ອນຢູ່ກັບເຮົາ.
4 ແລະ ຫລັງຈາກທີ່ພຣະອົງໄດ້ກ່າວກັບ
ພວກເພິ່ນແລ້ວ ພຣະອົງໄດ້ຫັນພຣະພັກ
ມາຫາອີກສາມຄົນ, ແລະ ໄດ້ກ່າວກັບພວກ
ເພິ່ນວ່າ: ພວກເຈົ້າຢາກໃຫ້ເຮົາເຮັດສິ່ງໃດ
ໃຫ້ພວກເຈົ້າ, ເມື່ອເຮົາໄປເຝົ້າພຣະບິດາ?
5 ແລະ ພວກເພິ່ນໄດ້ສະຫລົດຢູ່ໃນໃຈ,
ເພາະວ່າພວກເພິ່ນບໍ່ກ້າທູນພຣະອົງເຖິງ
ສິ່ງທີ່ພວກເພິ່ນປາດຖະໜາ.
6 ແລະ ພຣະອົງໄດ້ກ່າວກັບພວກເພິ່ນ
ວ່າ: ຈົ່ງເບິ່ງ, ເຮົາ [ກ]ຮູ້ຈັກຄວາມຄິດຂອງ
ພວກເຈົ້າ, ແລະ ພວກເຈົ້າປາດຖະໜາສິ່ງ
ດຽວກັນກັບທີ່ [ຂ]ໂຢຮັນທີ່ຮັກຂອງເຮົາໄດ້
ປາດຖະໜາ, ຜູ້ໄດ້ຢູ່ກັບເຮົາໃນການປະຕິ
ບັດສາດສະໜາກິດຂອງເຮົາ, ກ່ອນທີ່ເຮົາ
ຖືກຊາວຢິວຍົກຂຶ້ນ.
7 ສະນັ້ນ, ພວກເຈົ້າເປັນສຸກກວ່ານັ້ນ,
ເພາະພວກເຈົ້າຈະ [ກ]ບໍ່ຕ້ອງຊີມລົດຊາດ
ຂອງ [ຂ]ຄວາມຕາຍເລີຍ; ແຕ່ພວກເຈົ້າຈະ
ມີຊີວິດຢູ່ເພື່ອຈະໄດ້ເຫັນສິ່ງທັງໝົດທີ່ພຣະ
ບິດາຈະກະທຳກັບລູກຫລານມະນຸດ, ຈົນ
ວ່າທຸກສິ່ງທຸກຢ່າງຈະສຳເລັດຕາມນ້ຳ
ພຣະໄທຂອງພຣະບິດາ, ເມື່ອນັ້ນເຮົາຈະ
ມາໃນລັດສະໝີພາບຂອງເຮົາພ້ອມດ້ວຍ
[ຄ]ອຳນາດແຫ່ງສະຫວັນ.
8 ແລະ ພວກເຈົ້າຈະບໍ່ຕ້ອງຮັບຄວາມ
ເຈັບປວດຂອງຄວາມຕາຍເລີຍ; ແຕ່ວ່າ
ເວລາເຮົາມາໃນລັດສະໝີພາບຂອງເຮົາ
ພວກເຈົ້າຈະຖືກປ່ຽນໄປຊົ່ວພັບຕາດຽວ
ຈາກ [ກ]ຄວາມເປັນມະຕະໄປສູ່ [ຂ]ຄວາມເປັນ
ອະມະຕະ; ແລະ ເມື່ອນັ້ນ ພວກເຈົ້າຈະເປັນ
ສຸກໃນອານາຈັກຂອງພຣະບິດາຂອງເຮົາ.
9 ແລະ ອີກຢ່າງໜຶ່ງ, ພວກເຈົ້າຈະບໍ່ມີ
ຄວາມເຈັບປວດເວລາທີ່ພວກເຈົ້າຢູ່ໃນ
ເນື້ອໜັງ, ທັງບໍ່ມີຄວາມເສົ້າສະຫລົດໃຈ
ນອກຈາກຈະເປັນເພາະບາບຂອງໂລກ
ເທົ່ານັ້ນ; ແລະ ທັງໝົດນີ້ເຮົາຈະກະທຳ
ໄປເພື່ອສະໜອງຄວາມປາດຖະໜາຂອງ

**28** 3 *ກ* ຄມພ ພັກຜ່ອນ.
6 *ກ* ອມ 4:13; ແອວ 18:32.
*ຂ* ຢຮ 21:21–23; ຄພ 7:1–4.
7 *ກ* 4 ນຟ 1:14; ມມ 8:10–11; ອທ 12:17.
*ຂ* ຄມພ ບຸກຄົນທີ່ຖືກປ່ຽນສະພາບແລ້ວ.
*ຄ* 3 ນຟ 20:22.
8 *ກ* 3 ນຟ 28:36–40. ຄມພ ມະຕະ, ຄວາມເປັນມະຕະ.
*ຂ* ຄມພ ອະມະຕະ, ຄວາມເປັນອະມະຕະ.

ພວກເຈົ້າ, ເພາະພວກເຈົ້າມີຄວາມປະສົງ
ທີ່ຈະ [ກ]ຊັກນຳຈິດວິນຍານຂອງມະນຸດໃຫ້
ມາຫາເຮົາໃນເວລາທີ່ໂລກຍັງຕັ້ງຢູ່.
10 ແລະ ເພາະເຫດນີ້ ພວກເຈົ້າຈຶ່ງຈະ
[ກ]ເຕັມໄປດ້ວຍຄວາມສຸກ; ແລະ ພວກເຈົ້າ
ຈະໄດ້ນັ່ງລົງໃນອານາຈັກຂອງພຣະບິດາ
ຂອງເຮົາ; ແທ້ຈິງແລ້ວ, ຄວາມສຸກຂອງ
ພວກເຈົ້າຈະບໍລິບູນ, ດັ່ງເຊັ່ນພຣະບິດາໄດ້
ປະທານ ຄວາມສຸກອັນບໍລິບູນໃຫ້ແກ່ເຮົາ;
ແລະ ພວກເຈົ້າຈະເປັນດັ່ງເຮົາ, ດັ່ງທີ່ເຮົາ
ເປັນດັ່ງພຣະບິດາ, ແລະ ພຣະບິດາກັບເຮົາ
ເປັນ [ຂ]ໜຶ່ງ;
11 ແລະ [ກ]ພຣະ ວິນ ຍານ ບໍ ລິ ສຸດ ເປັນ
ພະຍານເຖິງພຣະບິດາ ແລະ ເຮົາ; ແລະ
ເປັນຍ້ອນເຮົາ ພຣະບິດາຈຶ່ງປະທານພຣະ
ວິນຍານບໍລິສຸດໃຫ້ແກ່ລູກຫລານມະນຸດ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ແລ້ວ,
ພຣະອົງໄດ້ແຕະຕ້ອງພວກເພິ່ນແຕ່ລະຄົນ
ດ້ວຍນິ້ວພຣະຫັດຂອງພຣະອົງ ຍົກເວັ້ນ
ແຕ່ສາມຄົນ ຊຶ່ງຈະຢູ່ຕໍ່ໄປ, ແລະ ຫລັງຈາກ
ນັ້ນພຣະອົງກໍໄດ້ຈາກໄປ.
13 ແລະ ຈົ່ງເບິ່ງ, ຟ້າສະຫວັນໄດ້ເປີດ
ອອກ, ແລະ ພວກເພິ່ນຖືກ [ກ]ພາຂຶ້ນໄປ
ສະຫວັນ, ແລະ ພວກເພິ່ນໄດ້ເຫັນ ແລະ
ໄດ້ຍິນເລື່ອງຊຶ່ງບໍ່ອາດຈະເວົ້າໄດ້.
14 ແລະ ພວກເພິ່ນຖືກ [ກ]ຫ້າມບໍ່ໃຫ້ເວົ້າ;
ທັງພວກເພິ່ນບໍ່ໄດ້ຮັບອຳນາດໃຫ້ເວົ້າເຖິງ
ເລື່ອງຊຶ່ງພວກເພິ່ນໄດ້ເຫັນ ແລະ ໄດ້ຍິນ
ນັ້ນ;
15 ແລະ ພວກເພິ່ນບອກບໍ່ໄດ້ວ່າ ພວກ
ເພິ່ນຢູ່ໃນຮ່າງກາຍ ຫລື ຢູ່ນອກຮ່າງກາຍ;
ເພາະວ່າພວກເພິ່ນໄດ້ຮູ້ສຶກເໝືອນເປັນ
[ກ]ການປ່ຽນສະພາບຂອງຕົນ, ຄືພວກເພິ່ນ
ຖືກປ່ຽນຈາກຮ່າງກາຍແຫ່ງເນື້ອໜັງໄປສູ່
ສະພາບທີ່ເປັນອະມະຕະ, ເພື່ອພວກເພິ່ນ
ຈະໄດ້ເຫັນສິ່ງທີ່ເປັນຂອງພຣະເຈົ້າໄດ້.
16 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກ
ເພິ່ນໄດ້ລົງມາປະຕິບັດສາດສະໜາກິດໃນ
ຜືນແຜ່ນດິນໂລກອີກ; ເຖິງຢ່າງໃດກໍຕາມ
ພວກເພິ່ນກໍບໍ່ໄດ້ປະຕິບັດກ່ຽວກັບເລື່ອງທີ່
ພວກເພິ່ນໄດ້ຍິນ ແລະ ໄດ້ເຫັນມາ, ເພາະ
ມັນເປັນພຣະບັນຊາທີ່ພວກເພິ່ນໄດ້ຮັບ
ຈາກສະຫວັນ.
17 ແລະ ບັດນີ້, ພວກເພິ່ນເປັນມະຕະ
ຢູ່ ຫລື ເປັນອະມະຕະຕັ້ງແຕ່ວັນທີ່ປ່ຽນ
ສະພາບຂອງພວກເພິ່ນນັ້ນ, ຂ້າພະເຈົ້າບໍ່
ຮູ້;
18 ແຕ່ວ່າຂ້າພະເຈົ້າຮູ້ພຽງເທົ່ານີ້ ຕາມ
ບັນທຶກຊຶ່ງໄດ້ຮັບມາ—ພວກເພິ່ນໄດ້ອອກ
ໄປທົ່ວຜືນແຜ່ນດິນ ແລະ ໄດ້ປະຕິບັດສາດ
ສະໜາກິດແກ່ຜູ້ຄົນທັງປວງ, ໄດ້ເຕົ້າໂຮມ
ຫລາຍຕໍ່ຫລາຍຄົນທີ່ເຊື່ອຈາກການສັ່ງ
ສອນຂອງພວກເພິ່ນເຂົ້າມາສູ່ສາດສະໜາ
ຈັກ; ໄດ້ບັບຕິສະມາໃຫ້ພວກເຂົາ, ແລະ
ຫລາຍຕໍ່ຫລາຍຄົນທີ່ຮັບບັບຕິສະມານັ້ນ
ໄດ້ຮັບພຣະວິນຍານບໍລິສຸດ.
19 ແລະ ພວກເພິ່ນໄດ້ຖືກຄົນທີ່ບໍ່ເປັນ
ຂອງສາດສະໜາຈັກຈັບເອົາເຂົ້າຄຸກ. ແລະ
[ກ]ຄຸກກໍຂັງພວກເພິ່ນໄວ້ບໍ່ໄດ້, ເພາະວ່າມັນ
ໄດ້ແຍກອອກເປັນສອງ.
20 ແລະ ພວກເພິ່ນຖືກໂຍນລົງໄປໃນ
ແຜ່ນດິນ; ແຕ່ພວກເພິ່ນໄດ້ຕີແຜ່ນດິນດ້ວຍ
ພຣະຄຳຂອງພຣະເຈົ້າ, ເຖິງຂະໜາດທີ່

9 *ກ* ຟລປ 1:23–24;
ຄພ 7:5–6.
10 *ກ* ຄພ 84:36–38.
*ຂ* ຢຮ 17:20–23.
11 *ກ* 2 ນຟ 31:17–21;
3 ນຟ 11:32.
13 *ກ* 2 ກຣທ 12:2–4.
14 *ກ* ຄພ 76:114–116.
15 *ກ* ມຊ 1:11.
ຄມພ ການປ່ຽນສະພາບ.
19 *ກ* ກຈກ 16:26;
ແອວ 14:26–28.

ໂດຍ ກອຳນາດຂອງພຣະອົງ ພວກເພິ່ນໄດ້
ຖືກປົດປ່ອຍຈາກຄວາມເລິກຂອງແຜ່ນດິນ;
ແລະ ສະນັ້ນ ພວກເຂົາຈຶ່ງບໍ່ສາມາດຂຸດ
ຫລຸມໃຫ້ເລິກພໍທີ່ຈະຂັງພວກເພິ່ນໄວ້ໄດ້.
21 ແລະ ພວກເພິ່ນຖືກໂຍນເຂົ້າໄປໃນ
ກເຕົາໄຟສາມເທື່ອ ແລະ ບໍ່ໄດ້ຮັບອັນຕະ
ລາຍ.
22 ແລະ ພວກເພິ່ນຖືກໂຍນເຂົ້າໃນ ກຖ້ຳ
ສັດຮ້າຍສອງເທື່ອ; ແລະ ຈົ່ງເບິ່ງ ພວກ
ເພິ່ນໄດ້ຫລິ້ນຢູ່ກັບສັດເຫລົ່ານັ້ນຄືກັນກັບ
ເດັກນ້ອຍຫລິ້ນກັບລູກແກະທີ່ຍັງກິນນົມຢູ່,
ແລະ ບໍ່ໄດ້ຮັບອັນຕະລາຍ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເພິ່ນໄດ້ອອກໄປດັ່ງນັ້ນໃນບັນດາຜູ້
ຄົນຂອງນີໄຟທັງໝົດ, ແລະ ໄດ້ສັ່ງສອນ
ກພຣະກິດຕິຄຸນຂອງພຣະຄຣິດໃຫ້ແກ່ຜູ້
ຄົນທັງໝົດໃນຜືນແຜ່ນດິນ; ແລະ ພວກ
ເຂົາໄດ້ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນ
ເຈົ້າ, ແລະ ໄດ້ຮ່ວມເຂົ້າໃນສາດສະໜາຈັກ
ຂອງພຣະຄຣິດ, ແລະ ຂຄົນລຸ້ນນັ້ນຈຶ່ງໄດ້
ຮັບພອນດັ່ງນີ້ຕາມພຣະຄຳຂອງພຣະເຢຊູ.
24 ແລະ ບັດນີ້ຂ້າພະເຈົ້ານໍມອນຂໍຈົບ
ການເວົ້າກ່ຽວກັບເລື່ອງເຫລົ່ານີ້ໄວ້ເທົ່ານີ້
ກ່ອນ.
25 ຈົ່ງເບິ່ງ, ຂ້າພະເຈົ້າກຳລັງຈະຂຽນ ກຊື່
ຂອງຜູ້ທີ່ບໍ່ຕ້ອງຊີມລົດຊາດຂອງຄວາມຕາຍ
ໄວ້, ແຕ່ພຣະຜູ້ເປັນເຈົ້າໄດ້ຫ້າມຂ້າພະເຈົ້າ
ບໍ່ໃຫ້ຂຽນ, ສະນັ້ນ ຂ້າພະເຈົ້າຈຶ່ງບໍ່ໄດ້ຂຽນ
ມັນໄວ້ ເພາະວ່າມັນຖືກປິດໄວ້ຈາກໂລກ.
26 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າໄດ້ເຫັນພວກ
ເພິ່ນ, ແລະ ພວກເພິ່ນໄດ້ປະຕິບັດສາດສະ
ໜາກິດແກ່ຂ້າພະເຈົ້າ.
27 ແລະ ຈົ່ງເບິ່ງພວກເພິ່ນຈະຢູ່ໃນບັນ
ດາຄົນຕ່າງຊາດ, ແລະ ຄົນຕ່າງຊາດຈະບໍ່
ຮູ້ຈັກພວກເພິ່ນເລີຍ.
28 ພວກເພິ່ນຈະຢູ່ໃນບັນດາຊາວຢິວ
ເໝືອນກັນ, ແລະ ຊາວຢິວຈະບໍ່ຮູ້ຈັກພວກ
ເພິ່ນເລີຍ.
29 ແລະ ເຫດການຈະບັງເກີດຂຶ້ນຄື ເມື່ອ
ພຣະຜູ້ເປັນເຈົ້າເຫັນວ່າສົມຄວນໃນຄວາມ
ສະຫລຽວສະຫລາດຂອງພຣະອົງທີ່ພວກ
ເພິ່ນຈະປະຕິບັດສາດສະໜາກິດແກ່ເຜົ່າ
ອິດສະຣາເອນທັງໝົດທີ່ແຕກ ກກະຈັດກະ
ຈາຍກັນໄປ, ແລະ ແກ່ທຸກປະຊາຊາດ,
ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງ
ປວງ, ແລະ ຈະນຳຄົນຢ່າງຫລວງຫລາຍ
ອອກມາຈາກພວກນັ້ນມາຫາພຣະເຢຊູ
ເພື່ອຄວາມປາດຖະໜາຂອງພວກເພິ່ນຈະ
ສຳເລັດ, ແລະ ເປັນຍ້ອນອຳນາດທີ່ເຮັດໃຫ້
ເຊື່ອຂອງພຣະເຈົ້າຊຶ່ງຢູ່ກັບພວກເພິ່ນ.
30 ແລະ ພວກເພິ່ນເປັນເໝືອນດັ່ງ
ກເຫລົ່າທູດຂອງພຣະເຈົ້າ, ແລະ ຖ້າຫາກ
ພວກເພິ່ນຈະອະທິຖານຫາພຣະບິດາໃນ
ພຣະນາມຂອງພຣະເຢຊູ ພວກເພິ່ນກໍຈະ
ສາມາດປະກົດຕົວໃຫ້ຜູ້ໃດຜູ້ໜຶ່ງເຫັນໄດ້
ຕາມແຕ່ພວກເພິ່ນເຫັນວ່າສົມຄວນ.
31 ສະນັ້ນ, ພວກເພິ່ນຈະກະທຳວຽກ
ງານອັນຍິ່ງໃຫຍ່ ແລະ ໜ້າອັດສະຈັນ
ກ່ອນມື້ອັນ ກຍິ່ງໃຫຍ່ຈະມາເຖິງ ເມື່ອທຸກຜູ້
ຄົນຈະຕ້ອງມາຢືນຕໍ່ໜ້າບັນລັງພິພາກສາ
ຂອງພຣະຄຣິດຢ່າງແນ່ນອນ.
32 ແທ້ຈິງແລ້ວ ແມ່ນແຕ່ໃນບັນດາຄົນ

20 ກ ມມ 8:24.
21 ກ ດນອ 3:22–27; 4 ນຟ 1:32.
22 ກ ດນອ 6:16–23; 4 ນຟ 1:33.
23 ກ ຄມພ ພຣະກິດຕິຄຸນ.
23 ຂ 3 ນຟ 27:30–31.
25 ກ 3 ນຟ 19:4.
29 ກ ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ; ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.
30 ກ ຄມພ ທູດ, ເທວະດາ.
31 ກ ຣລມ 12:25; 3 ນຟ 26:4–5.

ຕ່າງ ຊາດ ພວກ ເພິ່ນ ຈະ ກະ ທຳ ວຽກ ງານ
ອັນ [ກ]ຍິ່ງ ໃຫຍ່ ແລະ ໜ້າ ອັດ ສະ ຈັນ ກ່ອນ
ວັນພິພາກສານັ້ນ.
33 ແລະ ຖ້າ ຫາກ ທ່ານ ມີ ພຣະ ຄຳ ພີ ທັງ
ໝົດ ຊຶ່ງໃຫ້ເລື່ອງລາວກ່ຽວກັບວຽກງານອັນ
ໜ້າອັດສະ ຈັນໃຈທັງໝົດຂອງພຣະຄຣິດ,
ທ່ານກໍຈະຮູ້ຕາມພຣະຄຳຂອງພຣະຄຣິດວ່າ
ສິ່ງເຫລົ່ານີ້ຈະຕ້ອງເກີດຂຶ້ນຢ່າງແນ່ນອນ.
34 ແລະ ວິບັດແກ່ຄົນທີ່ຈະ [ກ]ບໍ່ເຊື່ອຟັງ
ພຣະຄຳຂອງພຣະເຢຊູ ແລະ ຂອງ [ຂ]ຄົນທີ່
ພຣະອົງໄດ້ເລືອກໄວ້ ແລະ ສົ່ງໄປໃນບັນດາ
ພວກເຂົານຳອີກ; ເພາະວ່າຜູ້ໃດກໍຕາມທີ່ບໍ່
ຮັບຟັງພຣະຄຳຂອງພຣະເຢຊູ ແລະ ຖ້ອຍ
ຄຳຂອງຄົນທີ່ພຣະອົງໄດ້ສົ່ງໄປ, ຜູ້ນັ້ນກໍບໍ່
ໄດ້ຮັບເອົາພຣະອົງ; ແລະ ສະນັ້ນພຣະອົງກໍ
ຈະບໍ່ຮັບເອົາພວກເຂົາໃນວັນສຸດທ້າຍ;
35 ແລະ ມັນຈະເປັນການດີກວ່າສຳລັບ
ເຂົາຖ້າຫາກເຂົາບໍ່ໄດ້ເກີດມາ. ເພາະທ່ານ
ຄິດບໍວ່າ ທ່ານຈະກຳຈັດຄວາມຍຸດຕິທຳ
ຂອງ ພຣະ ເຈົ້າ ຜູ້ ເຄືອງ ແຄ້ນ ໄດ້, ຜູ້ຖືກ
[ກ]ຢຽບຍ່ຳຢູ່ໃຕ້ຕີນຂອງມະນຸດ, ເພື່ອໂດຍ
ການນັ້ນຄວາມລອດຈະມາໄດ້?
36 ແລະ ບັດນີ້ຈົ່ງເບິ່ງ, ດັ່ງທີ່ຂ້າພະເຈົ້າ
ໄດ້ເວົ້າກ່ຽວກັບຄົນເຫລົ່ານັ້ນຜູ້ທີ່ພຣະຜູ້
ເປັນເຈົ້າໄດ້ເລືອກໄວ້, ແທ້ຈິງແລ້ວ, ແມ່ນ
ກ່ຽວກັບສາມຄົນທີ່ຖືກພາຂຶ້ນໄປໃນຟ້າ
ສະຫວັນ, ຄືຂ້າພະເຈົ້າບໍ່ຮູ້ວ່າ ພວກເພິ່ນ
ໄດ້ຖືກຊຳລະຈາກຄວາມເປັນມະຕະໄປຫາ
ຄວາມເປັນອະມະຕະແລ້ວຫລືບໍ່—
37 ແຕ່ ຈົ່ງ ເບິ່ງ, ນັບຕັ້ງແຕ່ຂ້າພະເຈົ້າ
ຂຽນມາ, ຂ້າພະເຈົ້າໄດ້ທູນຖາມພຣະຜູ້
ເປັນເຈົ້າ, ແລະ ພຣະອົງໄດ້ສະແດງໃຫ້ຂ້າ
ພະເຈົ້າປະຈັກວ່າ ມັນຈຳເປັນທີ່ຈະຕ້ອງມີ
ການປ່ຽນແປງເກີດຂຶ້ນກັບຮ່າງກາຍຂອງ
ພວກເພິ່ນ, ຖ້າບໍ່ດັ່ງນັ້ນພວກເພິ່ນຈະຕ້ອງ
ໄດ້ຊີມລົດຊາດຂອງຄວາມຕາຍ;
38 ສະນັ້ນ, ເພື່ອພວກເພິ່ນຈະບໍ່ໄດ້ຊີມ
ລົດຊາດຂອງຄວາມຕາຍ, ມັນຈຶ່ງມີການ
[ກ]ປ່ຽນແປງເກີດຂຶ້ນກັບຮ່າງກາຍຂອງພວກ
ເພິ່ນ, ເພື່ອພວກເພິ່ນຈະບໍ່ໄດ້ຮັບຄວາມ
ເຈັບປວດ ຫລື ຄວາມເສົ້າສະຫລົດໃຈ
ນອກຈາກເປັນເພາະບາບຂອງໂລກ.
39 ບັດນີ້ການປ່ຽນແປງນີ້ຍັງບໍ່ເທົ່າກັບ
ການປ່ຽນແປງທີ່ຈະເກີດຂຶ້ນໃນວັນສຸດ
ທ້າຍ; ແຕ່ມັນມີການປ່ຽນແປງເກີດຂຶ້ນ
ກັບພວກເພິ່ນ, ເຖິງຂະໜາດທີ່ຊາຕານບໍ່
ມີອຳນາດເໜືອພວກເພິ່ນ, ຄືມັນຈະບໍ່ສາ
ມາດ [ກ]ລໍ້ລວງພວກເພິ່ນໄດ້; ແລະ ພວກ
ເພິ່ນໄດ້ຮັບ [ຂ]ການຊຳລະໃຫ້ບໍລິສຸດແລ້ວ
ໃນເນື້ອໜັງ, ຈົນວ່າພວກເພິ່ນເປັນຜູ້ [ຄ]ບໍ
ລິສຸດ ແລະ ຈົນວ່າອຳນາດຂອງແຜ່ນດິນ
ໂລກບໍ່ສາມາດຍຶດພວກເພິ່ນໄວ້ໄດ້.
40 ແລະ ພວກເພິ່ນຈະຄົງຢູ່ໃນສະພາບ
ເຊັ່ນນີ້ຈົນເຖິງມື້ພິພາກສາຂອງພຣະຄຣິດ;
ແລະ ໃນມື້ນັ້ນພວກເພິ່ນຈະໄດ້ຮັບການ
ປ່ຽນແປງອັນຍິ່ງໃຫຍ່ກວ່ານີ້, ແລະ ຈະຖືກ
ຮັບເຂົ້າໄປໃນອານາຈັກຂອງພຣະບິດາ
ເພື່ອຈະບໍ່ໄດ້ອອກໄປອີກ, ແຕ່ຈະຢູ່ກັບ
ພຣະເຈົ້າໃນຟ້າສະຫວັນຊົ່ວນິລັນດອນ.

## ບົດທີ 29

*ການອອກມາຂອງພຣະຄຳພີມໍມອນຄື ເຄື່ອງໝາຍທີ່ ພຣະຜູ້ເປັນເຈົ້າໄດ້ເລີ່ມຕົ້ນ*

---

32 *ກ* 2 ນຟ 25:17.
34 *ກ* ອທ 4:8–12.
*ຂ* ຄມພ ສາດສະດາ.
35 *ກ* ຣລມ 12:2.
38 *ກ* ຄມພ ບຸກຄົນທີ່ຖືກ ປ່ຽນສະພາບແລ້ວ.
39 *ກ* ຄມພ ລໍ້ລວງ, ການລໍ້ລວງ.
*ຂ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຄ* ຄມພ ສັກສິດ, ຄວາມສັກສິດ.

*ເຕົ້າ ໂຮມ ຊາວ ອິດສະ ຣາເອນ ແລະ ເຮັດ
ໃຫ້ພັນທະ ສັນຍາຂອງພຣະອົງສຳເລັດ—
ຜູ້ທີ່ປະຕິເສດການເປີດເຜີຍ ແລະ ຂອງ
ປະທານຂອງພຣະອົງ ໃນຍຸກສຸດທ້າຍຈະ
ຖືກສາບແຊ່ງ. ປະມານ ຄ.ສ. 34–35.*

1 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ກັບທ່ານວ່າ ເມື່ອພຣະຜູ້ເປັນເຈົ້າເຫັນສົມ
ຄວນໃນຄວາມສະຫລຽວສະຫລາດຂອງ
ພຣະອົງ, ວ່າຂໍ້ຄວາມເຫລົ່ານີ້ຈະ [ກ]ມາສູ່
ຄົນຕ່າງຊາດ, ຕາມພຣະຄຳຂອງພຣະອົງ
ເມື່ອນັ້ນທ່ານຈະຮູ້ວ່າ [ຂ]ພັນທະສັນຍາຊຶ່ງ
ພຣະບິດາໄດ້ເຮັດໄວ້ກັບລູກຫລານອິດສະ
ຣາເອນກ່ຽວກັບການກັບຄືນມາຫາແຜ່ນ
ດິນຊຶ່ງເປັນມູນມໍລະດົກຂອງພວກເຂົານັ້ນ
ເລີ່ມຈະສຳເລັດແລ້ວ.
2 ແລະ ທ່ານຈະຮູ້ວ່າ ພຣະຄຳຂອງພຣະ
ຜູ້ເປັນເຈົ້າຊຶ່ງສາດສະດາຜູ້ບໍລິສຸດເວົ້າໄວ້
ຈະສຳເລັດທັງໝົດ; ແລະ ທ່ານບໍ່ຄວນເວົ້າ
ວ່າພຣະຜູ້ເປັນເຈົ້າ [ກ]ຊັກຊ້າໃນການສະ
ເດັດມາຫາລູກຫລານອິດສະຣາເອນ.
3 ແລະ ທ່ານບໍ່ຄວນຄິດຢູ່ໃນໃຈວ່າ ຄຳ
ທີ່ເວົ້າໄວ້ນັ້ນບໍ່ມີປະໂຫຍດ, ເພາະຈົ່ງເບິ່ງ,
ພຣະຜູ້ເປັນເຈົ້າຈື່ຈຳພັນທະສັນຍາຊຶ່ງພຣະ
ອົງໄດ້ເຮັດໄວ້ກັບຜູ້ຄົນຂອງພຣະອົງຜູ້ເປັນ
ເຊື້ອສາຍອິດສະຣາເອນ.
4 ແລະ ເມື່ອທ່ານເຫັນຂໍ້ຄວາມເຫລົ່ານີ້
ອອກມາໃນບັນດາພວກທ່ານ, ເມື່ອນັ້ນທ່ານ
ບໍ່ຄວນໝິ່ນປະໝາດການກະທຳຂອງພຣະ
ຜູ້ເປັນເຈົ້າອີກຕໍ່ໄປ, ເພາະວ່າ [ກ]ດາບແຫ່ງ
[ຂ]ຄວາມຍຸດຕິທຳຂອງພຣະອົງຢູ່ໃນພຣະ
ຫັດເບື້ອງຂວາຂອງພຣະອົງ; ແລະ ຈົ່ງເບິ່ງ,
ໃນມື້ນັ້ນ ຖ້າຫາກວ່າທ່ານໝິ່ນປະໝາດ
ການກະທຳຂອງພຣະອົງແລ້ວ ພຣະອົງຈະ
ເຮັດໃຫ້ມັນຕາມມາທັນທ່ານຢ່າງວ່ອງໄວ.
5 [ກ]ວິບັດແກ່ຄົນທີ່ [ຂ]ໝິ່ນປະໝາດການ
ກະທຳຂອງພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ,
ວິບັດແກ່ຄົນທີ່ [ຄ]ປະຕິເສດພຣະຄຣິດ ແລະ
ວຽກງານຂອງພຣະອົງ!
6 ແທ້ຈິງແລ້ວ, [ກ]ວິບັດແກ່ຄົນທີ່ປະຕິເສດ
ການເປີດເຜີຍຂອງພຣະຜູ້ເປັນເຈົ້າ, ແລະ
ເວົ້າວ່າພຣະຜູ້ເປັນເຈົ້າບໍ່ກະທຳວຽກງານ
ໂດຍການເປີດເຜີຍ, ຫລື ໂດຍການທຳ
ນາຍ, ຫລື ໂດຍ [ຂ]ຂອງປະທານ, ຫລື ໂດຍ
ພາສາ, ຫລື ໂດຍການປິ່ນປົວ, ຫລື ໂດຍ
ອຳນາດຂອງພຣະວິນຍານບໍລິສຸດຕໍ່ໄປອີກ
ແລ້ວ!
7 ແທ້ຈິງແລ້ວ, ແລະ ວິບັດແກ່ຜູ້ທີ່ຈະ
ເວົ້າສິ່ງນີ້ອອກມາໃນມື້ນັ້ນເພື່ອຫາ [ກ]ຜົນ
ປະໂຫຍດ, ວ່າມັນ [ຂ]ບໍ່ມີສິ່ງມະຫັດສະຈັນ
ເກີດຂຶ້ນໂດຍພຣະເຢຊູຄຣິດ; ເພາະຄົນທີ່
ທຳການນີ້ຈະເປັນດັ່ງ [ຄ]ບຸດແຫ່ງຄວາມຈິບ
ຫາຍ, ຊຶ່ງຄົນເຊັ່ນນີ້ຈະບໍ່ໄດ້ຮັບຄວາມເມດ
ຕາເລີຍຕາມພຣະຄຳຂອງພຣະຄຣິດທີ່ໃຫ້
ໄວ້!
8 ແທ້ຈິງແລ້ວ, ແລະ ທ່ານບໍ່ຄວນ [ກ]ດູຖູກ
ຫລື [ຂ]ໝິ່ນປະໝາດ, ຫລື ເຍາະເຍີ້ຍ [ຄ]ຊາວ
ຢິວ, ຫລື ຄົນໃດຜູ້ທີ່ເຫລືອຢູ່ຂອງເຊື້ອສາຍ
ອິດສະຣາເອນອີກຕໍ່ໄປ; ເພາະຈົ່ງເບິ່ງ,
ພຣະຜູ້ເປັນເຈົ້າຈື່ຈຳພັນທະສັນຍາຂອງ

**29** 1 *ກ* 2 ນຟ 30:3–8.
*ຂ* ມມ 5:14, 20.
2 *ກ* ລກ 12:45–48.
4 *ກ* 3 ນຟ 20:20.
*ຂ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
5 *ກ* 2 ນຟ 28:15–16.
*ຂ* ມມ 8:17; ອທ 4:8–10.
*ຄ* ມທ 10:32–33.
6 *ກ* ມມ 9:7–11, 15.
*ຂ* ຄມພ ຂອງປະທານແຫ່ງພຣະວິນຍານ.
7 *ກ* ຄມພ ການຫລອກລວງຂອງປະໂລຫິດ.
*ຂ* 2 ນຟ 28:4–6; ມມ 9:15–26.
*ຄ* ຄມພ ບຸດແຫ່ງຄວາມຈິບຫາຍ.
8 *ກ* 1 ນຟ 19:14.
*ຂ* 2 ນຟ 29:4–5.
*ຄ* ຄມພ ຊາວຢິວ.

ພຣະອົງທີ່ໃຫ້ໄວ້ກັບພວກເຂົາ, ແລະ ພຣະ
ອົງຈະກະທຳຕໍ່ພວກເຂົາຕາມທີ່ພຣະອົງໄດ້
ສາບານໄວ້.
9 ສະນັ້ນ ທ່ານບໍ່ຕ້ອງຄິດວ່າ ທ່ານຈະສາ
ມາດຫັນພຣະຫັດເບື້ອງຂວາຂອງພຣະຜູ້
ເປັນເຈົ້າໄປທາງຊ້າຍໄດ້, ເພື່ອວ່າພຣະອົງ
ຈະບໍ່ດຳເນີນການພິພາກສາ ຈົນເຖິງການ
ເຮັດໃຫ້ພັນທະສັນຍາຊຶ່ງພຣະອົງໄດ້ເຮັດ
ໄວ້ກັບເຊື້ອສາຍອິດສະຣາເອນສຳເລັດ.

## ບົດທີ 30

*ຄົນຕ່າງຊາດໃນຍຸກສຸດທ້າຍຖືກບັນຊາໃຫ້ກັບໃຈ, ມາຫາພຣະຄຣິດ, ແລະ ຖືກນັບເຂົ້າຢູ່ນຳເຊື້ອສາຍອິດສະຣາເອນ. ປະມານ ຄ.ສ. 34–35.*

1 ຈົ່ງເຊື່ອຟັງ, ໂອ້ ຄົນຕ່າງຊາດ, ແລະ
ຈົ່ງຟັງພຣະຄຳຂອງພຣະເຢຊູຄຣິດ, ພຣະ
ບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ຊຶ່ງພຣະ
ອົງໄດ້ [ກ]ບັນຊາໃຫ້ຂ້າພະເຈົ້າກ່າວກ່ຽວກັບ
ທ່ານ, ເພາະຈົ່ງເບິ່ງ, ພຣະອົງໄດ້ບັນຊາຂ້າ
ພະເຈົ້າໃຫ້ຂຽນໄວ້, ມີຄວາມວ່າ:
2 ຈົ່ງຫັນມາ, ເຈົ້າ [ກ]ຄົນຕ່າງຊາດທັງປວງ,
ຈາກທາງອັນຊົ່ວຮ້າຍຂອງເຈົ້າ; ແລະ [ຂ]ກັບ
ໃຈຈາກການເຮັດຊົ່ວຂອງເຈົ້າ, ຈາກການ
ເວົ້າຕົວະ ແລະ ການຫລອກລວງຂອງເຈົ້າ,
ແລະ ຈາກການໂສເພນີຂອງເຈົ້າ, ແລະ
ຈາກຄວາມໜ້າກຽດຊັງອັນລີ້ລັບຂອງເຈົ້າ,
ແລະ ການຂາບໄຫວ້ຮູບບູຊາຂອງເຈົ້າ,
ແລະ ການຄາດຕະກຳຂອງເຈົ້າ, ແລະ ການ
ຫລອກລວງຂອງປະໂລຫິດຂອງເຈົ້າ, ແລະ
ການອິດສາບັງບຽດຂອງເຈົ້າ, ແລະ ການ
ຜິດຖຽງກັນຂອງເຈົ້າ, ແລະ ຈາກຄວາມ
ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງທັງໝົດ
ຂອງເຈົ້າ, ແລະ ມາຫາເຮົາ ແລະ ຮັບບັບຕິ
ສະມາໃນນາມຂອງເຮົາ, ເພື່ອເຈົ້າຈະໄດ້
ຮັບການປົດບາບຂອງເຈົ້າ, ແລະ ເພື່ອຈະ
ໄດ້ເຕັມໄປດ້ວຍພຣະວິນຍານບໍລິສຸດ, ເພື່ອ
ເຈົ້າຈະຖືກ [ຄ]ນັບເຂົ້າຢູ່ກັບຜູ້ຄົນຂອງເຮົາ ຜູ້
ເປັນເຊື້ອສາຍອິດສະຣາເອນ.

# ນີໄຟສະບັບທີສີ່
# ໜັງສືນີໄຟ

**ຜູ້ເປັນລູກຊາຍຂອງນີໄຟ—ຊຶ່ງເປັນສານຸສິດຜູ້ໜຶ່ງຂອງພຣະເຢຊູຄຣິດ**

ເລື່ອງລາວຂອງຜູ້ຄົນຂອງນີໄຟຕາມບັນທຶກຂອງເພິ່ນ.

*ຊາວນີໄຟ ແລະ ຊາວເລມັນທັງໝົດປ່ຽນໃຈເຫລື້ອມໃສເຂົ້າຮ່ວມສາດສະໜາຈັກຂອງພຣະຜູ້ເປັນເຈົ້າ—ພວກເຂົາມີເຂົ້າຂອງທັງໝົດນຳກັນເປັນສ່ວນລວມ, ເຮັດສິ່ງມະຫັດສະຈັນ, ແລະ ຮຸ່ງເຮືອງຢູ່ໃນແຜ່ນດິນ—ຫລັງຈາກສອງສັດຕະວັດ, ການແຕກແຍກ,*

**30** 1*ກ* 3 ນຟ 5:12–13.
2*ກ* ຄມພ ຄົນຕ່າງຊາດ.
*ຂ* ຄມພ ກັບໃຈ, ການກັບໃຈ.
*ຄ* ຄລຕ 3:27–29; 2 ນຟ 10:18–19; 3 ນຟ 16:10–13; 21:22–25; ອຣຣ 2:10.

*ຄວາມຊົ່ວຮ້າຍ, ສາດສະໜາຈັກທີ່ບໍ່ຖືກ
ຕ້ອງ, ແລະ ການຂົ່ມເຫັງເລີ່ມເກີດຂຶ້ນ—
ຫລັງຈາກສາມຮ້ອຍປີ, ທັງຊາວນີໄຟ ແລະ
ຊາວເລມັນກາຍເປັນຄົນຊົ່ວ—ອາມມາ
ຣອນເຊື່ອງແຜ່ນຈາລຶກທີ່ສັກສິດໄວ້. ປະ
ມານ ຄ.ສ. 35–321.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີ
ສາມສິບສີ່ຜ່ານໄປ, ແລະ ປີທີສາມສິບຫ້າ
ນຳອີກ, ແລະ ຈົ່ງເບິ່ງ ສານຸສິດຂອງພຣະ
ເຢຊູໄດ້ຈັດຕັ້ງສາດສະໜາຈັກຂອງພຣະ
ຄຣິດຂຶ້ນໃນແຜ່ນດິນທັງໝົດໂດຍຮອບ.
ແລະ ຫລາຍຕໍ່ຫລາຍຄົນໄດ້ມາຫາພວກ
ເພິ່ນ, ແລະ ໄດ້ກັບໃຈຈາກບາບຂອງຕົນ
ຢ່າງແທ້ຈິງ, ໄດ້ຮັບບັບຕິສະມາໃນພຣະ
ນາມຂອງພຣະເຢຊູ; ແລະ ພວກເຂົາໄດ້
ຮັບພຣະວິນຍານບໍລິສຸດນຳອີກ.

2 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ສາມສິບຫົກຄື, ຜູ້ຄົນທັງໝົດທົ່ວພື້ນແຜ່ນ
ດິນໄດ້ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນ
ເຈົ້າ, ທັງຊາວນີໄຟ ແລະ ຊາວເລມັນ, ແລະ
ບໍ່ມີການຂັດແຍ້ງ ແລະ ການໂຕ້ຖຽງກັນໃນ
ບັນດາພວກເຂົາ, ແລະ ທຸກຄົນກໍໄດ້ປະຕິ
ບັດຕໍ່ກັນໂດຍທ່ຽງທຳ.

3 ແລະ ພວກເຂົາມີເຂົ້າຂອງ [ກ]ທັງໝົດ
ນຳກັນເປັນສ່ວນລວມ; ສະນັ້ນ ຈຶ່ງບໍ່ມີຄົນ
ຮັ່ງມີ ຫລື ຄົນຍາກຈົນ, ຂ້າທາດ ຫລື ຜູ້
ເປັນອິດສະລະ, ແຕ່ພວກເຂົາທຸກຄົນເປັນ
ອິດສະລະ, ແລະ ເປັນຜູ້ມີສ່ວນໃນຂອງ
ປະທານຈາກສະຫວັນ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີ
ສາມສິບເຈັດກໍໄດ້ຜ່ານໄປອີກ, ແລະ ມັນກໍ
ຍັງມີສັນຕິສຸກຢູ່ຕໍ່ໄປໃນແຜ່ນດິນ.

5 ແລະ ມີວຽກງານອັນຍິ່ງໃຫຍ່ ແລະ ໜ້າ
ອັດສະຈັນ ທີ່ສານຸສິດຂອງພຣະເຢຊູເຮັດ
ຂຶ້ນ, ເຖິງຂະໜາດທີ່ພວກເພິ່ນໄດ້ [ກ]ປິ່ນປົວ
ຄົນເຈັບປ່ວຍ, ແລະ ເຮັດໃຫ້ຄົນຕາຍຄືນມີ
ຊີວິດອີກ, ແລະ ເຮັດໃຫ້ຄົນເປ້ຍລ່ອຍຍ່າງ
ໄດ້, ແລະ ຄົນຕາບອດເຫັນຮຸ່ງ, ແລະ ຄົນ
ຫູໜວກໄດ້ຍິນ; ແລະ ພວກເພິ່ນໄດ້ເຮັດສິ່ງ
[ຂ]ມະຫັດສະຈັນນາໆປະການໃນບັນດາລູກ
ຫລານມະນຸດ; ແລະ ພວກເພິ່ນບໍ່ໄດ້ເຮັດ
ສິ່ງມະຫັດສະຈັນໂດຍວິທີອື່ນ ນອກຈາກ
ໃນພຣະນາມຂອງພຣະເຢຊູເທົ່ານັ້ນ.

6 ແລະ ປີທີສາມສິບແປດໄດ້ຜ່ານໄປດັ່ງ
ນີ້, ແລະ ປີທີສາມສິບເກົ້າ ແລະ ປີທີສີ່ສິບ
ເອັດ, ແລະ ປີທີສີ່ສິບສອງນຳອີກ, ແທ້ຈິງ
ແລ້ວ, ຈົນເຖິງປີທີສີ່ສິບເກົ້າຜ່ານໄປ, ແລະ
ປີທີຫ້າສິບເອັດອີກ, ແລະ ປີທີຫ້າສິບສອງ;
ແທ້ຈິງແລ້ວ, ຈົນປີທີຫ້າສິບເກົ້າຜ່ານໄປນຳ
ອີກ.

7 ແລະ ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ພວກ
ເຂົາຈະເລີນຮຸ່ງເຮືອງຢ່າງຍິ່ງໃນແຜ່ນດິນ;
ແທ້ຈິງແລ້ວ, ເຖິງຂະໜາດທີ່ພວກເຂົາໄດ້
ສ້າງເມືອງຂຶ້ນອີກໃນບ່ອນ ຊຶ່ງເຄີຍເປັນ
ເມືອງທີ່ຖືກເຜົາໄໝ້ໄປແລ້ວ.

8 ແທ້ຈິງແລ້ວ, ເຖິງແມ່ນ [ກ]ເມືອງເຊຣາ
ເຮັມລາ ຊຶ່ງເປັນເມືອງທີ່ຍິ່ງໃຫຍ່ນັ້ນ ກໍໄດ້
ຖືກສ້າງຂຶ້ນໃໝ່ອີກ.

9 ແຕ່ວ່າ ມີຫລາຍເມືອງ ຊຶ່ງໄດ້ [ກ]ຈົມລົງ,
ແລະ ນ້ຳເຂົ້າມາແທນທີ່; ສະນັ້ນ ຈຶ່ງສ້າງ
ເມືອງເຫລົ່ານັ້ນຂຶ້ນໃໝ່ບໍ່ໄດ້.

10 ແລະ ບັດນີ້, ຈົ່ງເບິ່ງເຫດການໄດ້ບັງ
ເກີດຂຶ້ນຄື ຜູ້ຄົນຂອງນີໄຟໄດ້ເຂັ້ມແຂງຂຶ້ນ,

---

**1** 3*ກ* ກຈກ 4:32;
3 ນຟ 26:19.
ຄມພ ອຸທິດຖວາຍ, ກົດ
ແຫ່ງການອຸທິດຖວາຍ.

5*ກ* ຄມພ ປິ່ນປົວ, ການປິ່ນປົວ.
*ຂ* ຢຣ 14:12.
ຄມພ ມະຫັດສະຈັນ,
ການມະຫັດສະຈັນ.

8*ກ* 3 ນຟ 8:8.
9*ກ* 3 ນຟ 9:4, 7.

ແລະ ມີຄົນເພີ່ມທະວີຂຶ້ນຢ່າງໄວ, ແລະ ກັບ
ເປັນຜູ້ຄົນທີ່ [ກ]ຈົບງາມ ແລະ ໜ້າຊົມທີ່ສຸດ.
11 ແລະ ພວກເຂົາໄດ້ແຕ່ງງານກັນ,
ແລະ ຍົກໃຫ້ແຕ່ງງານກັນ, ແລະ ໄດ້ຮັບ
ພອນຫລາຍປະການຕາມຄຳສັນຍາ ຊຶ່ງ
ພຣະຜູ້ເປັນເຈົ້າໄດ້ກະທຳໄວ້ກັບພວກເຂົາ.
12 ແລະ ພວກເຂົາບໍ່ໄດ້ເດີນໄປຕາມ
[ກ]ການປະຕິບັດ ແລະ ພິທີການຂອງ [ຂ]ກົດ
ຂອງໂມເຊອີກຕໍ່ໄປ; ແຕ່ວ່າພວກເຂົາໄດ້
ເດີນໄປຕາມພຣະບັນຍັດ ຊຶ່ງພວກເຂົາໄດ້
ຮັບຈາກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ, ໂດຍ [ຄ]ການຖືສິນອົດເຂົ້າ
ແລະ ການອະທິຖານ, ແລະ ການຊຸມນຸມ
ກັນເລື້ອຍໆເພື່ອອະທິຖານ ແລະ ເພື່ອຟັງ
ພຣະຄຳຂອງພຣະຜູ້ເປັນເຈົ້າ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ບໍ່
ມີການຂັດແຍ້ງກັນໃນບັນດາຜູ້ຄົນທັງໝົດ
ໃນທົ່ວແຜ່ນດິນ, ແຕ່ມີສິ່ງມະຫັດສະຈັນ
ອັນຍິ່ງໃຫຍ່ຕ່າງໆທີ່ເຮັດຂຶ້ນໃນບັນດາສາ
ນຸສິດຂອງພຣະເຢຊູ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີ
ທີເຈັດສິບເອັດຜ່ານໄປ ແລະ ປີທີເຈັດ
ສິບສອງອີກ, ແທ້ຈິງແລ້ວ, ແລະ ໂດຍສະ
ຫລຸບ, ຈົນຮອດປີທີເຈັດສິບເກົ້າໄດ້ຜ່ານ
ໄປ; ແທ້ຈິງແລ້ວ ຈົນຮອດໜຶ່ງຮ້ອຍປີຜ່ານ
ໄປ, ແລະ ສານຸສິດຂອງພຣະເຢຊູຜູ້ທີ່ພຣະ
ອົງໄດ້ເລືອກໄວ້ກໍໄດ້ຈາກໄປຫາ [ກ]ທີ່ສຸຂະ
ເສີມຂອງພຣະເຈົ້າທັງໝົດແລ້ວ ເວັ້ນເສຍ
ແຕ່ [ຂ]ສາມຄົນທີ່ຈະຍັງຄົງຢູ່ຕໍ່ໄປ; ແລະ ມີ
[ຄ]ສານຸສິດຜູ້ອື່ນໆໄດ້ຮັບ [ງ]ແຕ່ງຕັ້ງແທນ;
ແລະ ຜູ້ຄົນເປັນຈຳນວນຫລວງຫລາຍໃນ
ລຸ້ນນັ້ນກໍໄດ້ຈາກໄປເໝືອນກັນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
[ກ]ບໍ່ມີການຂັດແຍ້ງກັນໃນແຜ່ນດິນ, ຍ້ອນ
ວ່າຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນໃຈ
ຂອງຜູ້ຄົນ.
16 ແລະ ມັນ [ກ]ບໍ່ມີການອິດສາບັງບຽດ,
ບໍ່ມີການຜິດຖຽງກັນ, ບໍ່ມີການວຸ້ນວາຍ, ບໍ່
ມີການໂສເພນີ, ບໍ່ມີການເວົ້າຕົວະ, ບໍ່ມີ
ການຄາດຕະກຳ, [ຂ]ບໍ່ມີກິເລດຕັນຫາຢ່າງ
ໃດເລີຍ; ແລະ ໂດຍແນ່ນອນແລ້ວ ຄົງບໍ່ມີ
ຜູ້ຄົນກຸ່ມໃດທີ່ມີ [ຄ]ຄວາມສຸກຫລາຍໄປກວ່າ
ນີ້ໃນບັນດາຜູ້ຄົນທັງປວງທີ່ພຣະຫັດຂອງ
ພຣະເຈົ້າໄດ້ສ້າງຂຶ້ນມາ.
17 ມັນບໍ່ມີໂຈນ, ຫລື ຄາດຕະກອນ, ທັງ
ບໍ່ມີຊາວເລມັນ ຫລື ຊາວໃດໆເລີຍ; ແຕ່
ຄົນທັງໝົດຢູ່ເປັນ [ກ]ພວກດຽວກັນ, ເປັນລູກ
ຂອງພຣະຄຣິດ, ແລະ ທາຍາດຂອງອານາ
ຈັກຂອງພຣະເຈົ້າ.
18 ແລະ ພວກເຂົາໄດ້ເປັນສຸກຫລາຍ
ແທ້ໆ! ເພາະພຣະຜູ້ເປັນເຈົ້າໄດ້ປະທານ
ພອນໃຫ້ພວກເຂົາສຳລັບການກະທຳຂອງ
ພວກເຂົາທັງໝົດ; ແທ້ຈິງແລ້ວ, ພວກເຂົາ
ໄດ້ຮັບພອນ ແລະ ຈະເລີນຮຸ່ງເຮືອງຢູ່ເຖິງ
ແມ່ນໜຶ່ງຮ້ອຍສິບປີຜ່ານໄປ; ແລະ ຄົນ
ລຸ້ນທຳອິດນັບແຕ່ພຣະຄຣິດກໍໄດ້ຈາກໄປ,
ແລະ ມັນກໍບໍ່ໄດ້ມີການຂັດແຍ້ງກັນໃນທົ່ວ
ແຜ່ນດິນເລີຍ.

10 *ກ* ມມ 9:6.
12 *ກ* 2 ນຟ 25:30; 3 ນຟ 15:2–8.
*ຂ* ຄມພ ກົດຂອງໂມເຊ.
12 *ຄ* ມຣນ 6:5; ຄພ 88:76–77.
14 *ກ* ຄມພ ທີ່ສຸຂະເສີມ.
*ຂ* 3 ນຟ 28:3–9.
ຄມພ ບຸກຄົນທີ່ຖືກປ່ຽນສະພາບແລ້ວ.
*ຄ* ຄມພ ສານຸສິດ.
*ງ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
15 *ກ* ຄມພ ສະຫງົບ, ຄວາມສະຫງົບ.
16 *ກ* ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
*ຂ* ຄມພ ກິເລດຕັນຫາ.
*ຄ* ມຊຍ 2:41; ແອວ 50:23.
ຄມພ ຊື່ນຊົມ, ຄວາມຊື່ນຊົມ.
17 *ກ* ຢຮ 17:21.
ຄມພ ຊີໂອນ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟ, ຜູ້ທີ່ເຮັດບັນທຶກອັນສຸດທ້າຍນີ້ໄດ້ສິ້ນຊີວິດໄປ, (ຊຶ່ງເພິ່ນໄດ້ເຮັດບັນທຶກໄວ້ໃນ [ກ]ແຜ່ນຈາລຶກຂອງນີໄຟ) ແລະ ອາໂມ ລູກຊາຍຂອງເພິ່ນໄດ້ເຮັດບັນທຶກນີ້ແທນ; ແລະ ລາວກໍໄດ້ເຮັດບັນທຶກໄວ້ໃນແຜ່ນຈາລຶກຂອງນີໄຟນຳອີກ.

20 ແລະ ລາວໄດ້ຮັກສາບັນທຶກຢູ່ແປດສິບສີ່ປີ, ແລະ ສັນຕິສຸກກໍຍັງມີຢູ່ໃນແຜ່ນດິນ, ນອກຈາກຜູ້ຄົນສ່ວນໜ້ອຍໜຶ່ງທີ່ອອກໄປຈາກສາດສະໜາຈັກ ແລະ ເອີ້ນຊື່ຕົນວ່າ ຊາວເລມັນ; ສະນັ້ນ ມັນຈຶ່ງເລີ່ມມີຊາວເລມັນຢູ່ໃນແຜ່ນດິນອີກ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ອາໂມໄດ້ສິ້ນຊີວິດໄປຄືກັນ, (ແລະ ມັນເປັນໜຶ່ງຮ້ອຍເກົ້າສິບສີ່ປີນັບແຕ່ການສະເດັດມາຂອງພຣະຄຣິດ) ແລະ ອາໂມລູກຊາຍຂອງລາວໄດ້ຮັກສາບັນທຶກແທນ; ແລະ ລາວກໍໄດ້ບັນທຶກໄວ້ໃນແຜ່ນຈາລຶກຂອງນີໄຟຄືກັນ; ແລະ ມັນມີຂຽນໄວ້ໃນໜັງສືນີໄຟນຳອີກ ຊຶ່ງແມ່ນໜັງສືເຫລັ້ມນີ້.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ສອງຮ້ອຍປີໄດ້ຜ່ານໄປ; ແລະ ຄົນລຸ້ນທີສອງໄດ້ຜ່ານໄປໝົດ ນອກຈາກບໍ່ເທົ່າໃດຄົນເທົ່ານັ້ນ.

23 ແລະ ບັດນີ້ຂ້າພະເຈົ້າມໍມອນຢາກໃຫ້ທ່ານຮູ້ວ່າ ຜູ້ຄົນໄດ້ເພີ່ມທະວີຂຶ້ນ, ເຖິງຂະໜາດທີ່ພວກເຂົາໄດ້ແຜ່ຂະຫຍາຍໄປທົ່ວພື້ນແຜ່ນດິນ, ແລະ ວ່າພວກເຂົາກັບເປັນຄົນຮັ່ງມີຢ່າງຍິ່ງ, ເພາະຄວາມຈະເລີນຮຸ່ງເຮືອງຂອງພວກເຂົາໃນພຣະຄຣິດ.

24 ແລະ ບັດນີ້, ໃນປີທີສອງຮ້ອຍໜຶ່ງໄດ້ເລີ່ມມີບາງຄົນໃນບັນດາພວກເຂົາທີ່ລະເມີເພີ້ຝັນດ້ວຍ [ກ]ຄວາມທະນົງຕົວ ເຊັ່ນ ການນຸ່ງຖືເສື້ອຜ້າທີ່ມີລາຄາແພງ, ແລະ ໃສ່ເຄື່ອງປະດັບຢ່າງດີນາໆຊະນິດ ແລະ ໃຊ້ຂອງດີໆຂອງໂລກ.

25 ແລະ ນັບແຕ່ເວລານັ້ນໄປພວກເຂົາບໍ່ໄດ້ມີສິ່ງຂອງ ແລະ ເຂົ້າຂອງຮວມກັນ [ກ]ເປັນສ່ວນລວມໃນບັນດາພວກເຂົາອີກຕໍ່ໄປ.

26 ແລະ ພວກເຂົາເລີ່ມແບ່ງຊັ້ນວັນນະກັນ; ແລະ ພວກເຂົາເລີ່ມສ້າງ [ກ]ສາດສະໜາຈັກຂອງຕົນເອງຂຶ້ນ ເພື່ອຫາ [ຂ]ຜົນປະໂຫຍດ, ແລະ ເລີ່ມປະຕິເສດສາດສະໜາຈັກທີ່ແທ້ຈິງຂອງພຣະຄຣິດ.

27 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອສອງຮ້ອຍສິບປີຜ່ານໄປ ກໍໄດ້ມີສາດສະໜາຈັກຢູ່ຫລາຍແຫ່ງໃນແຜ່ນດິນ; ແທ້ຈິງແລ້ວ, ມີຫລາຍສາດສະໜາຈັກຊຶ່ງອ້າງວ່າຕົນຮູ້ຈັກພຣະຄຣິດ, ແຕ່ພວກເຂົາໄດ້ [ກ]ປະຕິເສດພຣະກິດຕິຄຸນສ່ວນໃຫຍ່ຂອງພຣະອົງ, ເຖິງຂະໜາດທີ່ພວກເຂົາໄດ້ຍອມຮັບຄວາມຊົ່ວຮ້າຍນາໆປະການ, ແລະ ໄດ້ປະຕິບັດສິ່ງທີ່ສັກສິດແກ່ຄົນທີ່ຖືກ [ຂ]ຫ້າມເພາະຄວາມບໍ່ມີຄ່າຄວນ.

28 ແລະ [ກ]ສາດສະໜາຈັກແຫ່ງນີ້ໄດ້ມີສະມາຊິກເພີ່ມທະວີຂຶ້ນຢ່າງຫລວງຫລາຍ ຍ້ອນວ່າຄວາມຊົ່ວຮ້າຍ, ແລະ ຍ້ອນວ່າອຳນາດຂອງຊາຕານຜູ້ຊຶ່ງມີອຳນາດເໜືອໃຈຂອງພວກເຂົາ.

29 ແລະ ອີກອັນໜຶ່ງ, ມັນມີສາດສະໜາຈັກອີກແຫ່ງໜຶ່ງທີ່ປະຕິເສດພຣະ

19 ກ ຄມພ ແຜ່ນຈາລຶກ.
24 ກ ຄມພ ຈອງຫອງ, ຄວາມຈອງຫອງ.
25 ກ 4 ນຟ 1:3.
26 ກ 1 ນຟ 22:23; 2 ນຟ 28:3; ມມ 8:32–38.
ຂ ຄພ 10:56. ຄມພ ການຫລອກລວງຂອງປະໂລຫິດ.
27 ກ ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
ຂ 3 ນຟ 18:28–29.
28 ກ ຄມພ ມານ—ສາດສະໜາຈັກຂອງມານ.

ຄຣິດ; ແລະ ພວກ ເຂົາ ໄດ້ [ກ]ຂົ່ມ ເຫັງ ສາດສະໜາຈັກທີ່ແທ້ຈິງຂອງພຣະຄຣິດ, ຍ້ອນວ່າ ຄວາມ ຖ່ອມ ຕົວ ຂອງ ພວກ ເຂົາ ແລະ ຄວາມເຊື່ອຂອງພວກເຂົາໃນພຣະຄຣິດ; ແລະ ພວກເຂົາໄດ້ໝິ່ນປະໝາດພວກເຂົາ ຍ້ອນວ່າສິ່ງມະຫັດສະຈັນຫລາຍຢ່າງຊຶ່ງກະທຳຂຶ້ນໃນບັນດາພວກເຂົາ.

30 ສະນັ້ນ ພວກເຂົາຈຶ່ງໄດ້ໃຊ້ອຳນາດ ແລະ ສິດອຳນາດຂົ່ມຂູ່ສານຸສິດຂອງພຣະເຢຊູຜູ້ທີ່ຢູ່ກັບພວກເຂົາ, ແລະ ພວກເຂົາໄດ້ ເອົາ ພວກ ເພິ່ນ ເຂົ້າ [ກ]ຄຸກ; ແຕ່ໂດຍອຳນາດຂອງພຣະຄຳຂອງພຣະເຈົ້າຊຶ່ງຢູ່ກັບພວກເພິ່ນ, ຄຸກຈຶ່ງແຍກອອກເປັນສອງ, ແລະ ພວກເພິ່ນກໍໄດ້ອອກໄປ ເຮັດ ສິ່ງມະຫັດສະຈັນອັນຍິ່ງໃຫຍ່ໃນບັນດາພວກເຂົາ.

31 ເຖິງ ຢ່າງ ໃດ ກໍ ຕາມ, ແລະ ທັງໆ ທີ່ສິ່ງມະຫັດສະຈັນທັງໝົດນີ້ໄດ້ເກີດຂຶ້ນຢູ່ກໍຕາມ, ແຕ່ຜູ້ຄົນກໍຍັງເຮັດໃຈແຂງກະດ້າງຢູ່, ແລະ ໄດ້ພະຍາຍາມທີ່ຈະຂ້າພວກເພິ່ນເໝືອນດັ່ງຊາວຢິວທີ່ຢູ່ເຢຣູຊາເລັມພະຍາຍາມຂ້າພຣະເຢຊູຕາມພຣະຄຳຂອງພຣະອົງ.

32 ແລະ ເຂົາ ໄດ້ ໂຍນ ພວກ ເພິ່ນ ເຂົ້າ [ກ]ເຕົາ [ຂ]ໄຟ, ແຕ່ພວກເພິ່ນໄດ້ອອກມາໂດຍບໍ່ໄດ້ຮັບອັນຕະລາຍຢ່າງໃດ.

33 ແລະ ເຂົາໄດ້ໂຍນພວກເພິ່ນເຂົ້າໃນ [ກ]ຖ້ຳສັດຮ້າຍອີກ, ແລະ ພວກເພິ່ນໄດ້ຫລິ້ນຢູ່ກັບສັດຮ້າຍເຫລົ່ານັ້ນຄືກັນກັບເດັກນ້ອຍຫລິ້ນຢູ່ນຳລູກແກະ; ແລະ ພວກເພິ່ນໄດ້ອອກມາຈາກສັດເຫລົ່ານັ້ນໂດຍບໍ່ໄດ້ຮັບອັນຕະລາຍເລີຍ.

34 ເຖິງຢ່າງໃດກໍຕາມ, ຜູ້ຄົນກໍຍັງເຮັດໃຈແຂງກະດ້າງຢູ່, ເພາະວ່າພວກເຂົາໄດ້ຖືກຊັກນຳໄປໂດຍພວກນັກທຳ ແລະ ໂດຍສາດສະດາປອມຫລາຍຄົນ ເພື່ອໃຫ້ສ້າງສາດສະໜາຈັກຫລາຍບ່ອນຂຶ້ນ, ແລະ ໃຫ້ເຮັດຄວາມຊົ່ວຮ້າຍນາໆປະການ. ແລະ ພວກເຂົາໄດ້ [ກ]ທຸບຕີຜູ້ຄົນຂອງພຣະເຢຊູ; ແຕ່ວ່າຜູ້ຄົນຂອງພຣະເຢຊູບໍ່ໄດ້ໂຕ້ຕອບເລີຍ. ແລະ ພວກເຂົາໄດ້ເສື່ອມໂຊມລົງດັ່ງນັ້ນຢູ່ໃນຄວາມບໍ່ເຊື່ອຖືໄປແຕ່ລະປີ ແລະ ຢູ່ໃນຄວາມຊົ່ວຮ້າຍຈົນວ່າສອງຮ້ອຍສາມສິບປີຜ່ານໄປ.

35 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີນີ້, ແທ້ຈິງແລ້ວ, ໃນປີສອງຮ້ອຍສາມສິບເອັດ, ມັນເກີດມີການແບ່ງແຍກກັນຢ່າງໃຫຍ່ຫລວງໃນບັນດາຜູ້ຄົນ.

36 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີນີ້ ມັນໄດ້ເກີດມີຜູ້ຄົນກຸ່ມໜຶ່ງ ຊຶ່ງມີຊື່ວ່າ ຊາວນີໄຟ, ແລະ ພວກເຂົາເປັນຜູ້ທີ່ມີຄວາມເຊື່ອຢ່າງແທ້ຈິງໃນພຣະຄຣິດ; ແລະ ໃນບັນດາພວກເຂົາມີພວກອື່ນອີກທີ່ຊາວເລມັນເອີ້ນວ່າ—ຊາວຢາໂຄບ, ຊາວໂຢເຊັບ, ແລະ ຊາວໂຊຣຳ;

37 ສະນັ້ນ ຜູ້ທີ່ເຊື່ອໃນພຣະຄຣິດຢ່າງແທ້ຈິງ, ແລະ ຜູ້ນະມັດສະການຢ່າງແທ້ຈິງຂອງພຣະຄຣິດ, (ລວມທັງ [ກ]ສານຸສິດສາມຄົນຂອງພຣະເຢຊູ ຊຶ່ງຈະຄົງຢູ່ຕໍ່ໄປ) ຖືກເອີ້ນວ່າ ຊາວນີໄຟ, ແລະ ຊາວຢາໂຄບ, ແລະ ຊາວໂຢເຊັບ, ແລະ ຊາວໂຊຣຳ.

38 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ທີ່ປະຕິເສດພຣະກິດຕິຄຸນຖືກເອີ້ນວ່າ ຊາວເລມັນ, ຊາວເລມູເອນ, ແລະ ຊາວອິດຊະ

29 *ກ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
30 *ກ* 3 ນຟ 28:19–20.
32 *ກ* 3 ນຟ 28:21.
*ຂ* ດນອ 3:26–27.
33 *ກ* 3 ນຟ 28:22.
34 *ກ* 3 ນຟ 12:39; ຄພ 98:23–27.
37 *ກ* 3 ນຟ 28:6–7; ມມ 8:10–11.

ມາເອນ; ແລະ ພວກເຂົາບໍ່ໄດ້ເສື່ອມໂຊມ
ຢູ່ໃນຄວາມບໍ່ເຊື່ອຖື, ແຕ່ພວກເຂົາໄດ້
*ກ*ກະບົດຕໍ່ພຣະກິດຕິຄຸນຂອງພຣະຄຣິດ
ໂດຍເຈດຕະນາ; ແລະ ພວກເຂົາໄດ້ສິດ
ສອນລູກຫລານຂອງພວກເຂົາບໍ່ໃຫ້ເຊື່ອ,
ເໝືອນດັ່ງທີ່ບັນພະບຸລຸດຂອງພວກເຂົາ, ທີ່
ບໍ່ໄດ້ເຊື່ອຕັ້ງແຕ່ຕົ້ນມາ.

39 ແລະ ເປັນຍ້ອນຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງຂອງບັນພະບຸລຸດຂອງ
ພວກເຂົາຄືກັນກັບທີ່ເປັນມາແລ້ວນັບຕັ້ງ
ແຕ່ຕົ້ນມາ. ແລະ ພວກເຂົາຈຶ່ງຖືກ *ກ*ສິດ
ສອນໃຫ້ກຽດຊັງລູກຂອງພຣະເຈົ້າ, ຄືກັນ
ກັບຊາວເລມັນຖືກສິດສອນໃຫ້ກຽດຊັງລູກ
ຫລານຊາວນີໄຟນັບຕັ້ງແຕ່ຕົ້ນມາ.

40 ແລະ ເຫດການໄດ້ບັງເກີດຂຶ້ນຄື ສອງ
ຮ້ອຍສີ່ສິບສີ່ປີຜ່ານໄປ ແລະ ການງານ
ຂອງຜູ້ຄົນເປັນໄປດັ່ງນັ້ນ. ແລະ ຜູ້ຄົນສ່ວນ
ທີ່ຊົ່ວຫລາຍກວ່າກໍເຂັ້ມແຂງຂຶ້ນ, ແລະ ກັບ
ມີຈຳນວນຫລາຍກວ່າຜູ້ຄົນຂອງພຣະເຈົ້າ.

41 ແລະ ພວກເຂົາຍັງຄົງສ້າງສາດສະ
ໜາຈັກໃຫ້ຕົນເອງຢູ່ຕໍ່ໄປ, ແລະ ຕົກແຕ່ງ
ມັນດ້ວຍຂອງມີຄ່ານາໆຊະນິດ. ແລະ ສອງ
ຮ້ອຍຫ້າສິບປີໄດ້ຜ່ານໄປດັ່ງນີ້, ແລະ ສອງ
ຮ້ອຍຫົກສິບປີກໍຜ່ານໄປອີກ.

42 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນກຸ່ມທີ່ຊົ່ວເລີ່ມເຮັດຄຳສາບານ ແລະ
ເຮັດ *ກ*ການມົ້ວສຸມລັບຂອງແກດີອານທັນ
ຂຶ້ນອີກ.

43 ແລະ ຜູ້ຄົນຜູ້ມີຊື່ວ່າ ຜູ້ຄົນຂອງນີໄຟ
ເລີ່ມອວດດີໃນໃຈ, ຍ້ອນວ່າຂອງມີຄ່າຢ່າງ
ຫລວງຫລາຍຂອງພວກເຂົາ, ແລະ ກັບມາ
ຖືຕົວຄືກັນກັບຊາວເລມັນພີ່ນ້ອງຂອງພວກ
ເຂົາ.

44 ແລະ ນັບແຕ່ເວລານີ້ໄປ ສານຸສິດ
ກໍເລີ່ມເສົ້າສະຫລົດໃຈເພາະ *ກ*ບາບຂອງ
ໂລກ.

45 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ສາມຮ້ອຍປີຜ່ານໄປ, ທັງຜູ້ຄົນຂອງນີໄຟ
ແລະ ຜູ້ຄົນຂອງເລມັນກັບມາເປັນຄົນຊົ່ວ
ຫລາຍຂຶ້ນເທົ່າໆກັນ.

46 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຈນ
ແກດີອານທັນໄດ້ແຜ່ຂະຫຍາຍໄປທົ່ວພື້ນ
ແຜ່ນດິນ; ແລະ ບໍ່ມີຜູ້ໃດຈັກຄົນທີ່ຊອບທຳ
ນອກຈາກສານຸສິດຂອງພຣະເຢຊູເທົ່ານັ້ນ.
ແລະ ພວກເຂົາໄດ້ຄ້າຂາຍຄຳ ແລະ ເງິນ
ຢູ່ໃນຮ້ານຄ້າຢ່າງຫລວງຫລາຍ, ແລະ ໄດ້
ເຮັດການຄ້າຂາຍອື່ນໆນຳອີກ.

47 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກສາມຮ້ອຍຫ້າປີຜ່ານໄປ, (ແລະ
ຜູ້ຄົນຍັງຄົງຢູ່ໃນຄວາມຊົ່ວຮ້າຍຢູ່) ອາໂມ
ໄດ້ສິ້ນຊີວິດໄປ; ແລະ ອາມມາຣອນນ້ອງ
ຊາຍຂອງລາວໄດ້ຮັກສາບັນທຶກແທນ.

48 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ສາມຮ້ອຍຊາວປີຜ່ານໄປ, ອາມມາຣອນ
ໂດຍຖືກພຣະວິນຍານບໍລິສຸດຊີ້ນຳໄດ້
ເຊື່ອງ *ກ*ບັນທຶກທີ່ສັກສິດໄວ້—ແທ້ຈິງແລ້ວ,
ແມ່ນບັນທຶກສັກສິດທັງໝົດ ຊຶ່ງຖືກມອບ
ຕໍ່ໆກັນມາຈາກລຸ້ນສູ່ລຸ້ນ—ຈົນເຖິງປີທີ
ສາມຮ້ອຍຊາວນັບຕັ້ງແຕ່ການສະເດັດມາ
ຂອງພຣະຄຣິດ.

49 ແລະ ລາວໄດ້ເຊື່ອງມັນໄວ້ກັບພຣະ
ຜູ້ເປັນເຈົ້າ, ເພື່ອມັນຈະຖືກ *ກ*ນຳອອກມາ
ຫາເຊື້ອສາຍຂອງຢາໂຄບຜູ້ທີ່ເຫລືອຢູ່ອີກ,
ຕາມຄຳທຳນາຍ ແລະ ຕາມຄຳສັນຍາຂອງ
ພຣະຜູ້ເປັນເຈົ້າ. ແລະ ບັນທຶກຂອງອາມ
ມາຣອນຈົບລົງດັ່ງນີ້.

38 *ກ* ຄມພ ກະບົດ, ການກະບົດ.
39 *ກ* ມຊຢ 10:17.
42 *ກ* ຄມພ ການມົ້ວສຸມລັບ.
44 *ກ* 3 ນຟ 28:9.
48 *ກ* ຣລມ 3:13, 15–16.
49 *ກ* ອນ 1:13.

# ໜັງສືມໍມອນ

## ບົດທີ 1

*ອາມມາຣອນແນະນຳມໍມອນກ່ຽວກັບແຜ່ນຈາລຶກສັກສິດ—ສົງຄາມລະຫວ່າງຊາວນີໄຟກັບຊາວເລມັນ—ຊາວນີໄຟສາມຄົນຖືກພາໜີໄປ—ຄວາມຊົ່ວຮ້າຍ, ຄວາມບໍ່ເຊື່ອຖື, ເວດມົນ, ແລະ ຄາຖາອາຄົມມີຂຶ້ນ. ປະມານ ຄ.ສ. 321–326.*

1 ແລະ ບັດນີ້ຂ້າພະເຈົ້າ [ກ]ມໍມອນເຮັດ
[ຂ]ບັນທຶກກ່ຽວກັບເລື່ອງທີ່ຂ້າພະເຈົ້າໄດ້
ເຫັນ ແລະ ໄດ້ຍິນ ແລະ ເອີ້ນໜັງສືນີ້ວ່າ
ໜັງສືມໍມອນ.
2 ແລະ ມັນຄົງເປັນໄລຍະເວລາໃກ້ກັບ
ຕອນທີ່ [ກ]ອາມມາຣອນເຊື່ອງບັນທຶກໄວ້ກັບ
ພຣະຜູ້ເປັນເຈົ້ານັ້ນ, ເພິ່ນໄດ້ມາຫາຂ້າພະ
ເຈົ້າ, (ຕອນນັ້ນຂ້າພະເຈົ້າມີອາຍຸປະມານ
ສິບປີ, ແລະ ຂ້າພະເຈົ້າເລີ່ມມີ [ຂ]ຄວາມຮູ້
ແດ່ແລ້ວຕາມແບບການຮຽນຮູ້ຂອງຜູ້ຄົນ
ຂອງຂ້າພະເຈົ້າ) ແລະ ອາມມາຣອນໄດ້
ເວົ້າກັບຂ້າພະເຈົ້າວ່າ: ຂ້ອຍເຫັນວ່າເຈົ້າ
ເປັນເດັກທີ່ຈິງຈັງ ແລະ ເຈົ້າຮູ້ຈັກສັງເກດ;
3 ສະນັ້ນ, ເມື່ອເຈົ້າມີອາຍຸໄດ້ຊາວສີ່ປີ
ຂ້ອຍຢາກໃຫ້ເຈົ້າຈົດຈຳເລື່ອງທີ່ເຈົ້າໄດ້ສັງ
ເກດມາກ່ຽວກັບຜູ້ຄົນພວກນີ້; ແລະ ເວລາ
ເຈົ້າມີອາຍຸໄດ້ເທົ່ານັ້ນ ຈົ່ງໄປຫາແຜ່ນດິນ
ອານທຳ, ໄປຫາເນີນພູທີ່ມີຊື່ວ່າ [ກ]ຊິມ; ແລະ
ບ່ອນນັ້ນແຫລະທີ່ຂ້ອຍໄດ້ຝັງແຜ່ນຈາລຶກ
ສັກສິດທັງໝົດກ່ຽວກັບຜູ້ຄົນພວກນີ້ໄວ້ກັບ
ພຣະຜູ້ເປັນເຈົ້າ.
4 ແລະ ຈົ່ງເບິ່ງ, ໃຫ້ເຈົ້າເອົາ [ກ]ແຜ່ນ
ຈາລຶກຂອງນີໄຟ, ແລະ ສ່ວນທີ່ຍັງເຫລືອຢູ່
ນັ້ນໃຫ້ເຈົ້າປະມັນໄວ້ໃນບ່ອນທີ່ມັນຢູ່ນັ້ນ;
ແລະ ໃຫ້ບັນທຶກເລື່ອງທັງໝົດທີ່ເຈົ້າສັງ
ເກດມາກ່ຽວກັບຜູ້ຄົນພວກນີ້ໄວ້ໃນແຜ່ນ
ຈາລຶກຂອງນີໄຟນັ້ນ.
5 ແລະ ຂ້າພະເຈົ້າມໍມອນໂດຍເປັນຜູ້ສືບ
ຕະກຸນຂອງ [ກ]ນີໄຟ, (ແລະ ບິດາຂອງຂ້າພະ
ເຈົ້າກໍມີຊື່ວ່າ ມໍມອນ) ຂ້າພະເຈົ້າຈຶ່ງຈື່ຈຳ
ເລື່ອງຊຶ່ງອາມມາຣອນໄດ້ສັ່ງຂ້າພະເຈົ້າໄວ້.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຂ້າພະເຈົ້າມີອາຍຸໄດ້ສິບເອັດປີ, ບິດາຂອງ
ຂ້າພະເຈົ້າໄດ້ພາຂ້າພະເຈົ້າໄປຫາແຜ່ນ
ດິນທາງໃຕ້, ຈົນໄປຮອດແຜ່ນດິນເຊຣາ
ເຮັມລາ.
7 ທົ່ວແຜ່ນດິນໄດ້ເຕັມໄປດ້ວຍອາຄານ
ບ້ານເຮືອນຕ່າງໆ, ແລະ ມີຜູ້ຄົນຢູ່ຢ່າງ
ຫລວງຫລາຍ ຄືກັບວ່າ ດິນຊາຍໃນທະເລ.
8 ແລະ ເຫດການໄດ້ບັງເກີດຂຶ້ນໃນປີນີ້ຄື
ມັນເລີ່ມມີສົງຄາມລະຫວ່າງຊາວນີໄຟ, ຊຶ່ງ
ຊາວນີໄຟໄດ້ສົມທົບເຂົ້າກັບຊາວຢາໂຄບ
ແລະ ຊາວໂຢເຊັບ ແລະ ຊາວໂຊຣຳ; ແລະ
ສົງຄາມນີ້ເປັນໄປລະຫວ່າງຊາວນີໄຟກັບ
ຊາວເລມັນ ແລະ ຊາວເລມູເອນ ແລະ ຊາວ
ອິດຊະມາເອນ.
9 ບັດນີ້ຊາວເລມັນ ແລະ ຊາວເລມູເອນ
ແລະ ຊາວອິດຊະມາເອນຖືກເອີ້ນວ່າ ຊາວ
ເລມັນ, ແລະ ສົງຄາມນີ້ແມ່ນລະຫວ່າງ
ຊາວນີໄຟກັບຊາວເລມັນ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ສົງ
ຄາມເລີ່ມເກີດຂຶ້ນໃນບັນດາພວກເຂົາທີ່

---

**1** 1*ກ* ຄມພ ມໍມອນ, ສາດສະດາຊາວນີໄຟ.
*ຂ* 3 ນຟ 5:11–18.
2*ກ* 4 ນຟ 1:47–49.
*ຂ* ມຊຍ 1:3–5.
3*ກ* ອທ 9:3.
4*ກ* ຄມ 1:1, 11.
ຄມພ ແຜ່ນຈາລຶກ.
5*ກ* 3 ນຟ 5:12, 20.

ຊາຍແດນເຊຣາເຮັມລາ, ໃກ້ແມ່ນ້ຳຊີໂດນ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຊາວນີໄຟໄດ້ເຕົ້າໂຮມພົນທະຫານໄວ້ເປັນ
ຈຳນວນຫລວງຫລາຍ, ເຖິງຂະໜາດທີ່ມີ
ຈຳນວນຫລາຍກວ່າສາມໝື່ນຄົນ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້
ມີການສູ້ຮົບກັນຫລາຍເທື່ອໃນປີດຽວກັນ
ນີ້, ຊຶ່ງຊາວນີໄຟໄດ້ເອົາຊະນະຊາວເລມັນ
ແລະ ໄດ້ຂ້າພວກເຂົາເປັນຈຳນວນຫລວງ
ຫລາຍ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນ ໄດ້ລົ້ມເລີກແຜນການຂອງພວກ
ເຂົາ, ແລະ ມັນຈຶ່ງໄດ້ມີສັນຕິສຸກຢູ່ໃນແຜ່ນ
ດິນອີກ; ແລະ ສັນຕິສຸກໄດ້ຄົງຢູ່ເປັນເວລາ
ປະມານສີ່ປີ, ຄືບໍ່ມີການຂ້າຟັນກັນເລີຍ.
13 ແຕ່ວ່າຄວາມຊົ່ວຮ້າຍໄດ້ແຜ່ຂະ
ຫຍາຍໄປທົ່ວພື້ນແຜ່ນດິນ, ເຖິງຂະໜາດ
ທີ່ພຣະຜູ້ເປັນເຈົ້າໄດ້ເອົາສານຸສິດ [ກ]ທີ່ຮັກ
ຂອງພຣະອົງໄປ, ແລະ ວຽກງານແຫ່ງການ
ມະຫັດສະຈັນ ແລະ ການປິ່ນປົວໄດ້ຢຸດລົງ
ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ.
14 ແລະ ບໍ່ມີ [ກ]ຂອງປະທານມາຈາກພຣະ
ຜູ້ເປັນເຈົ້າ, ແລະ [ຂ]ພຣະວິນຍານບໍລິສຸດບໍ່
ໄດ້ສະເດັດມາຫາຜູ້ໃດ, ເພາະຄວາມຊົ່ວ
ຮ້າຍ ແລະ ຄວາມ [ຄ]ບໍ່ເຊື່ອຖືຂອງພວກເຂົາ.
15 ແລະ ຂ້າພະເຈົ້າຊຶ່ງມີອາຍຸໄດ້ສິບຫ້າ
ປີ ແລະ ພໍມີຄວາມຄິດແດ່ແລ້ວ, ສະນັ້ນ
ຂ້າພະເຈົ້າຈຶ່ງໄດ້ຮັບການສະເດັດມາຢ້ຽມ
ຢາມຈາກພຣະຜູ້ເປັນເຈົ້າ, ແລະ ໄດ້ຊີມລົດ
ຊາດ ແລະ ຮູ້ເຖິງພຣະກະລຸນາທິຄຸນຂອງ
ພຣະເຢຊູ.
16 ແລະ ຂ້າພະເຈົ້າໄດ້ພະຍາຍາມສັ່ງ
ສອນຜູ້ຄົນພວກນີ້, ແຕ່ຂ້າພະເຈົ້າຖືກປິດ
ປາກໄວ້, ແລະ ຂ້າພະເຈົ້າຖືກຫ້າມບໍ່ໃຫ້
ສັ່ງສອນພວກເຂົາ; ເພາະຈົ່ງເບິ່ງ ພວກເຂົາ
ໄດ້ [ກ]ກະບົດຕໍ່ພຣະເຈົ້າຂອງພວກເຂົາໂດຍ
ເຈດຕະນາ; ແລະ ສານຸສິດທີ່ຮັກຖືກ [ຂ]ພາ
ໜີໄປຈາກແຜ່ນດິນ, ເພາະຄວາມຊົ່ວຮ້າຍ
ຂອງພວກເຂົາ.
17 ແຕ່ຂ້າພະເຈົ້າຍັງຄົງຢູ່ໃນບັນດາພວກ
ເຂົາ, ແຕ່ຂ້າພະເຈົ້າຖືກຫ້າມບໍ່ໃຫ້ສັ່ງສອນ
ພວກເຂົາ, ເພາະຄວາມແຂງກະດ້າງຂອງ
ໃຈຂອງພວກເຂົາ; ແລະ ເພາະຄວາມແຂງ
ກະດ້າງຂອງໃຈຂອງພວກເຂົານີ້, ແຜ່ນດິນ
ຈຶ່ງຖືກ [ກ]ສາບແຊ່ງເພາະພວກເຂົາ.
18 ແລະ ພວກໂຈນແກດີອານທັນເຫລົ່າ
ນີ້, ຜູ້ຊຶ່ງຢູ່ໃນບັນດາຊາວເລມັນ, ໄດ້ລົບ
ກວນແຜ່ນດິນ, ເຖິງຂະໜາດທີ່ຜູ້ອາໄສ
ຢູ່ໃນນັ້ນເລີ່ມເຊື່ອງ [ກ]ຊັບສົມບັດຂອງຕົນ
ໄວ້ໃນດິນ; ແລະ ມັນໄດ້ສູນຫາຍໄປເພາະ
ພຣະຜູ້ເປັນເຈົ້າໄດ້ສາບແຊ່ງແຜ່ນດິນໄວ້,
ເພາະພວກເຂົາຈະຍຶດມັນໄວ້ບໍ່ໄດ້, ທັງຈະ
ເອົາມັນຄືນມາອີກກໍບໍ່ໄດ້.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ມີເວດມົນ, ຄາຖາ, ແລະ ໄສຍະສາດ; ແລະ
ອຳນາດຂອງມານຮ້າຍກະທຳຂຶ້ນຢູ່ທົ່ວພື້ນ
ແຜ່ນດິນ, ຈົນວ່າເຮັດໃຫ້ຄຳທຳນາຍຂອງ
ອະບີນາໄດ ແລະ ຂອງຊາມູເອນຄົນເລມັນ
ໄດ້ຮັບຄວາມສຳເລັດທັງໝົດ.

## ບົດທີ 2

*ມໍມອນນຳພາກອງທັບນີໄຟ—ເລືອດ ແລະ ການຂ້າຟັນຂະຫຍາຍອອກໄປທົ່ວແຜ່ນ*

13 *ກ* 3 ນຟ 28:2, 12.
14 *ກ* ມຣນ 10:8–18, 24.
*ຂ* ຄມພ ພຣະວິນຍານບໍລິສຸດ.
*ຄ* ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
16 *ກ* ຄມພ ກະບົດ, ການກະບົດ.
*ຂ* ມມ 8:10.
17 *ກ* 2 ນຟ 1:7; ແອວ 45:10–14, 16.
18 *ກ* ຮລມ 13:18–20; ອຫ 14:1–2.

*ດິນ—ຊາວ ນີໄຟ ຄ່ຳ ຄວນ ແລະ ໄວ້ ທຸກ ເພາະຄວາມເສົ້າສະຫລົດໃຈກັບຄວາມອັບ ປະໂຫຍດ—ວັນເວລາແຫ່ງພຣະຄຸນຂອງ ພວກເຂົາໄດ້ຜ່ານໄປ—ມໍມອນຮັບ ແຜ່ນ ຈາລຶກຂອງນີໄຟໄວ້—ສົງຄາມດຳເນີນຕໍ່ ໄປ. ປະມານ ຄ.ສ. 327–350.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ ປີດຽວກັນນັ້ນ ໄດ້ມີສົງຄາມອີກລະຫວ່າງ ຊາວເລມັນກັບຊາວນີໄຟ. ແລະ ເຖິງແມ່ນ ວ່າຂ້າພະເຈົ້າເອງກໍມີອາຍຸນ້ອຍຢູ່ແຕ່ວ່າມີ ຮ່າງກາຍໃຫຍ່ສູງ; ສະນັ້ນ ຜູ້ຄົນຂອງນີໄຟ ຈຶ່ງໄດ້ແຕ່ງຕັ້ງໃຫ້ຂ້າພະເຈົ້າເປັນຜູ້ນຳຂອງ ພວກເຂົາ, ຫລື ເປັນຜູ້ນຳກອງທັບຂອງ ພວກເຂົາ.

2 ສະນັ້ນ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື ເວລາຂ້າພະເຈົ້າມີອາຍຸໄດ້ສິບຫົກປີ ຂ້າ ພະເຈົ້າໄດ້ອອກນຳໜ້າກອງທັບຂອງຊາວ ນີໄຟເພື່ອໄປຕໍ່ສູ້ກັບຊາວເລມັນ; ສະນັ້ນ ເວລາສາມຮ້ອຍຊາວຫົກປີໄດ້ຜ່ານໄປ.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ ປີສາມຮ້ອຍຊາວເຈັດ ຊາວເລມັນໄດ້ເຂົ້າ ມາໂຈມຕີພວກເຮົາດ້ວຍກຳລັງອັນຫລວງ ຫລາຍທີ່ສຸດ, ເຖິງຂະໜາດທີ່ພວກເຂົາ ໄດ້ເຮັດໃຫ້ກອງທັບຂອງຂ້າພະເຈົ້າຕົກ ໃຈ; ສະນັ້ນພວກເຂົາຈຶ່ງ ບໍ່ຍອມຕໍ່ສູ້, ແລະ ພວກເຂົາເລີ່ມຖອຍໄປຫາແຜ່ນດິນທາງ ເໜືອ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ ເຮົາໄດ້ມາຮອດເມືອງໜຶ່ງມີຊື່ວ່າ ອານໂກ ລາ, ແລະ ພວກເຮົາ ໄດ້ເຂົ້າໄປ ເປັນເຈົ້າ ຂອງເມືອງນັ້ນ, ແລະ ໄດ້ຕຽມພ້ອມເພື່ອ ປ້ອງກັນຕົວໃຫ້ພົ້ນຈາກຊາວເລມັນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ ເສີມສ້າງກຳລັງປ້ອງກັນ ເມືອງ ຈົນໝົດ ຄວາມສາມາດຂອງພວກເຮົາ; ເຖິງແມ່ນ ວ່າພວກເຮົາໄດ້ເສີມສ້າງກຳລັງທັງໝົດໄວ້ ກໍຕາມ ແຕ່ຊາວເລມັນກໍຍັງໄດ້ມາໂຈມຕີ ພວກເຮົາ ແລະ ໄດ້ຂັບໄລ່ພວກເຮົາອອກ ຈາກເມືອງນັ້ນໄປ.

5 ແລະ ພວກເຂົາໄດ້ຂັບໄລ່ພວກເຮົາ ອອກຈາກແຜ່ນດິນດາວິດນຳອີກ.

6 ແລະ ພວກເຮົາໄດ້ເດີນທັບຕໍ່ໄປ ແລະ ມາຮອດແຜ່ນດິນໂຢຊວຍ, ຊຶ່ງຕັ້ງຢູ່ຕາມ ຊາຍ ແດນ ທາງ ຕາ ເວັນ ຕົກ ໃກ້ກັບຝັ່ງ ທະເລ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ ເຮົາໄດ້ທ້ອນໂຮມຜູ້ຄົນຂອງພວກເຮົາຢ່າງ ວ່ອງໄວທີ່ສຸດເທົ່າທີ່ຈະໄວໄດ້, ເພື່ອພວກ ເຮົາຈະໄດ້ທ້ອນໂຮມພວກເຂົາໄວ້ເປັນກຸ່ມ ດຽວກັນ.

8 ແຕ່ຈົ່ງເບິ່ງ, ແຜ່ນດິນນັ້ນເຕັມໄປດ້ວຍ ພວກໂຈນ ແລະ ຊາວເລມັນ; ແລະ ທັງໆທີ່ ຄວາມພິນາດອັນໃຫຍ່ຫລວງຊຶ່ງລໍຖ້າຜູ້ຄົນ ຂອງຂ້າພະເຈົ້າຢູ່, ພວກເຂົາກໍບໍ່ໄດ້ກັບໃຈ ຈາກການເຮັດຄວາມຊົ່ວຂອງພວກເຂົາ; ສະນັ້ນ ມັນຈຶ່ງມີເລືອດ ແລະ ການຂ້າຟັນ ຕະຫລອດທົ່ວຜືນແຜ່ນດິນ, ທັງຝ່າຍຊາວ ເລມັນ ແລະ ຝ່າຍຊາວນີໄຟເຊັ່ນດຽວກັນ; ແລະ ມັນມີການປະຕິວັດທົ່ວຜືນແຜ່ນດິນ.

9 ແລະ ບັດນີ້, ຊາວເລມັນມີກະສັດຄົນ ໜຶ່ງຊື່ວ່າ ອາໂຣນ; ແລະ ລາວໄດ້ມາສູ້ຮົບ ກັບພວກເຮົາດ້ວຍກຳລັງທັບສີ່ໝື່ນສີ່ພັນ ຄົນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ ພະເຈົ້າໄດ້ຕໍ່ຕ້ານລາວດ້ວຍກຳລັງສີ່ໝື່ນ ສອງພັນຄົນ. ແລະ ເຫດການໄດ້ບັງເກີດ ຂຶ້ນຄື ຂ້າພະເຈົ້າໄດ້ເອົາຊະນະລາວດ້ວຍ ກຳລັງກອງທັບຂອງຂ້າພະເຈົ້າຈົນເຮັດໃຫ້ ລາວປົບໜີໄປຕໍ່ໜ້າຂ້າພະເຈົ້າ. ແລະ ຈົ່ງ ເບິ່ງ, ທັງໝົດນີ້ໄດ້ເປັນໄປ ແລະ ສາມຮ້ອຍ ສາມສິບປີກໍໄດ້ຜ່ານໄປ.

10 ແລະ ເຫດການ ໄດ້ບັງເກີດຂຶ້ນຄື

ຊາວນີໄຟໄດ້ກັບໃຈຈາກຄວາມຊົ່ວຮ້າຍ
ຂອງພວກເຂົາ, ແລະ ເລີ່ມຮ້ອງໄຫ້ຂຶ້ນຄື
ກັນກັບທີ່ສາດສະດາຊາມູເອນໄດ້ທຳນາຍ
ໄວ້; ເພາະຈົ່ງເບິ່ງ ບໍ່ມີຜູ້ໃດທີ່ຈະຮັກສາ
ສິ່ງທີ່ເປັນຂອງຕົນເອງໄວ້ໄດ້ ເພາະວ່າຂະ
ໂມຍ, ແລະ ໂຈນ, ແລະ ຄາດຕະກອນ,
ແລະ ການໃຊ້ໄສຍະສາດ, ແລະ ການໃຊ້
ເວດມົນ, ແລະ ຄາຖາອາຄົມ ຊຶ່ງມີຢູ່ໃນ
ແຜ່ນດິນ.

11 ມັນຈຶ່ງເລີ່ມມີການໄວ້ທຸກ ແລະ ມີ
ການຄ່ຳຄວນຢູ່ດັ່ງນັ້ນທົ່ວຜືນແຜ່ນດິນ
ເພາະສິ່ງເຫລົ່ານີ້, ແລະ ໂດຍສະເພາະຢ່າງ
ຍິ່ງແມ່ນເກີດຂຶ້ນໃນບັນດາຜູ້ຄົນຂອງນີໄຟ.

12 ແລະ ເຫດການໄດ້ບັງເກີດຂຶ້ນຄືເມື່ອ
ຂ້າພະເຈົ້າມໍມອນເຫັນການຄ່ຳຄວນ ແລະ
ການໄວ້ທຸກຂອງພວກເຂົາ ແລະ ເຫັນ
ຄວາມເສົ້າສະຫລົດໃຈຂອງພວກເຂົາຕໍ່
ພຣະພັກຂອງພຣະຜູ້ເປັນເຈົ້າ, ໃຈຂອງຂ້າ
ພະເຈົ້າກໍເລີ່ມປິຕິຍິນດີຢູ່ພາຍໃນໂດຍທີ່
ຮູ້ຈັກຄວາມເມດຕາ ແລະ ຄວາມອົດກັ້ນ
ຂອງພຣະຜູ້ເປັນເຈົ້າ, ສະນັ້ນ ໂດຍທີ່ຄິດ
ວ່າພຣະອົງຈະເມດຕາພວກເຂົາ ເພື່ອພວກ
ເຂົາຈະໄດ້ປ່ຽນໃຈເປັນຄົນຊອບທຳອີກ.

13 ແຕ່ຈົ່ງເບິ່ງ ຄວາມສຸກຂອງຂ້າພະເຈົ້າ
ບໍ່ມີປະໂຫຍດອັນໃດເລີຍ ເພາະ [ກ]ຄວາມ
ເສົ້າສະຫລົດໃຈຂອງພວກເຂົາບໍ່ແມ່ນເພື່ອ
ການກັບໃຈເພາະພຣະກະລຸນາທິຄຸນຂອງ
ພຣະເຈົ້າ; ແຕ່ເປັນຄວາມເສົ້າສະຫລົດໃຈ
ຂອງຜູ້ທີ່ [ຂ]ອັບປະໂຫຍດເພາະພຣະຜູ້ເປັນ
ເຈົ້າບໍ່ຍອມໃຫ້ພວກເຂົາໄດ້ຮັບ [ຄ]ຄວາມ
ສຸກໃນບາບສະເໝີໄປ.

14 ແລະ ພວກເຂົາບໍ່ໄດ້ມາຫາພຣະເຢຊູ
ດ້ວຍ [ກ]ໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳ
ນຶກຜິດ, ແຕ່ວ່າພວກເຂົາໄດ້ [ຂ]ສາບແຊ່ງ
ພຣະເຈົ້າ, ແລະ ປາດຖະໜາທີ່ຈະຕາຍ.
ເຖິງຢ່າງໃດກໍຕາມ ພວກເຂົາຍັງດີ້ນລົນ
ດ້ວຍດາບເພື່ອປ້ອງກັນຊີວິດຂອງພວກ
ເຂົາຢູ່.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຄວາມເສົ້າສະຫລົດໃຈຂອງຂ້າພະເຈົ້າໄດ້
ຫວນຄືນມາຫາຂ້າພະເຈົ້າອີກ, ແລະ ຂ້າ
ພະເຈົ້າເຫັນວ່າ [ກ]ວັນແຫ່ງ [ຂ]ພຣະຄຸນສຳ
ລັບພວກເຂົາໄດ້ [ຄ]ຜ່ານໄປແລ້ວ, ທັງທາງ
ໂລກ ແລະ ທາງວິນຍານ; ເພາະວ່າຂ້າພະ
ເຈົ້າໄດ້ເຫັນພວກເຂົາຫລາຍພັນຄົນຖືກ
ໂຄ່ນລົງຂະນະທີ່ພວກເຂົາມີການກະບົດ
ຕໍ່ພຣະເຈົ້າຂອງພວກເຂົາຢ່າງເປີດເຜີຍ,
ແລະ ກອງກັນຂຶ້ນຄືກັນກັບກອງຝຸ່ນສັດທີ່
ຢາຍໄປທົ່ວຜືນແຜ່ນດິນ. ແລະ ສາມຮ້ອຍ
ສີ່ສິບສີ່ປີກໍໄດ້ຜ່ານໄປດັ່ງນີ້.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີທີສາມຮ້ອຍສີ່ສິບຫ້າ ຊາວນີໄຟໄດ້ເລີ່ມ
ໜີໄປທາງໜ້າຊາວເລມັນ; ແລະ ພວກເຂົາ
ຖືກໄລ່ຕິດຕາມໄປຮອດແຜ່ນດິນເຈຊອນ,
ກ່ອນທີ່ຊາວເລມັນຈະສາມາດຢັບຢັ້ງຊາວ
ນີໄຟໄວ້ໄດ້.

17 ແລະ ບັດນີ້, ເມືອງເຈຊອນນີ້ຕັ້ງຢູ່ໃກ້
ກັບ [ກ]ແຜ່ນດິນທີ່ອາມມາຣອນໄດ້ມ້ຽນບັນ
ທຶກໄວ້ກັບພຣະຜູ້ເປັນເຈົ້າ, ເພື່ອມັນຈະບໍ່
ໄດ້ຖືກທຳລາຍ. ແລະ ຈົ່ງເບິ່ງ ຂ້າພະເຈົ້າ
ກໍໄດ້ໄປຕາມຄຳເວົ້າຂອງອາມມາຣອນ
ແລະ ໄດ້ເອົາແຜ່ນຈາລຶກຂອງນີໄຟອອກ
ມາ ແລະ ໄດ້ເຮັດບັນທຶກຕາມຄຳເວົ້າຂອງ
ອາມມາຣອນ.

---

**2** 13 *ກ* 2 ກຣທ 7:10; ແອວ 42:29.
*ຂ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
*ຄ* ແອວ 41:10.
14 *ກ* ຄມພ ຫົວໃຈທີ່ຊອກຊ້ຳ.
*ຂ* ຄມພ ໝິ່ນປະໝາດ, ການໝິ່ນປະໝາດ.
15 *ກ* ຮລມ 13:38.
*ຂ* ຄມພ ພຣະຄຸນ.
*ຄ* ຢມຢ 8:20; ຄພ 56:16.
17 *ກ* ມມ 1:1–4.

18 ໃນແຜ່ນຈາລຶກຂອງນີໄຟ ຂ້າພະເຈົ້າ
ໄດ້ບັນທຶກເລື່ອງລາວຕ່າງໆໄວ້ຢ່າງຄົບ
ຖ້ວນກ່ຽວກັບຄວາມຊົ່ວຮ້າຍ ແລະ ຄວາມ
ໜ້າກຽດຊັງທັງໝົດ; ແຕ່ວ່າໃນ [ກ]ແຜ່ນ
ຈາລຶກເຫລົ່ານີ້ ຂ້າພະເຈົ້າໄດ້ຖືກຫ້າມບໍ່
ໃຫ້ບັນທຶກເລື່ອງລາວຢ່າງຄົບຖ້ວນກ່ຽວ
ກັບຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດ
ຊັງຂອງພວກເຂົາໄວ້, ເພາະຈົ່ງເບິ່ງ, ພາບ
ຂອງຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດ
ຊັງນັ້ນມີຢູ່ໃນສາຍຕາຂອງຂ້າພະເຈົ້າ
ຕະຫລອດເວລານັບຕັ້ງແຕ່ຂ້າພະເຈົ້າພໍທີ່
ຈະເຫັນທາງຂອງມະນຸດໄດ້.
19 ແລະ ຂ້າພະເຈົ້າເປັນທຸກຫລາຍຍ້ອນ
ຄວາມຊົ່ວຮ້າຍຂອງຄົນເຫລົ່ານີ້; ເພາະວ່າ
ໃຈຂອງຂ້າພະເຈົ້າເຕັມໄປດ້ວຍຄວາມເສົ້າ
ສະຫລົດໃຈຍ້ອນວ່າຄວາມຊົ່ວຮ້າຍຂອງ
ຄົນເຫລົ່ານີ້ມາຕະຫລອດວັນເວລາຂອງ
ຂ້າພະເຈົ້າ; ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າ
ຍັງຮູ້ວ່າ ຂ້າພະເຈົ້າຈະຖືກ [ກ]ຍົກຂຶ້ນໃນວັນ
ສຸດທ້າຍ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີນີ້ຜູ້ຄົນຂອງນີໄຟຖືກຂ້າຕາຍ ແລະ ຖືກ
ຂັບໄລ່ອອກໄປ. ແລະ ເຫດການໄດ້ບັງ
ເກີດຂຶ້ນຄື ພວກເຮົາຖືກຂັບໄລ່ຂຶ້ນໄປທາງ
ເໜືອ ຈົນວ່າພວກເຮົາມາຮອດແຜ່ນດິນທີ່
ມີຊື່ວ່າ ເຊມ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ເສີມກຳລັງເມືອງເຊມຂຶ້ນ,
ແລະ ພວກເຮົາໄດ້ເຕົ້າໂຮມຜູ້ຄົນຂອງ
ພວກເຮົາໃຫ້ຫລາຍທີ່ສຸດເທົ່າທີ່ຈະເຮັດ
ໄດ້, ເພື່ອບາງທີພວກເຮົາອາດຈະຊ່ວຍກັນ
ໃຫ້ພົ້ນຈາກຄວາມພິນາດໄດ້.
22 ແລະ ເຫດການໄດ້ບັງເກີດຂຶ້ນໃນປີ
ທີສາມຮ້ອຍສີ່ສິບຫົກ ພວກເຂົາໄດ້ເລີ່ມມາ
ໂຈມຕີພວກເຮົາອີກ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເວົ້າກັບຜູ້ຄົນຂອງຂ້າພະເຈົ້າ
ແລະ ໄດ້ຂໍຮ້ອງຢ່າງຈິງຈັງເພື່ອໃຫ້ພວກ
ເຂົາຢືນ [ກ]ຕໍ່ສູ້ຢ່າງກ້າຫານຕໍ່ໜ້າຊາວ
ເລມັນເພື່ອເມຍຂອງພວກເຂົາ, ແລະ ເພື່ອ
ລູກຂອງພວກເຂົາ, ແລະ ເພື່ອເຮືອນຂອງ
ພວກເຂົາ, ແລະ ເພື່ອບ້ານຂອງພວກເຂົາ.
24 ແລະ ຄຳເວົ້າຂອງຂ້າພະເຈົ້າໄດ້ປຸກ
ລະດົມໃຫ້ພວກເຂົາມີຄວາມເຂັ້ມແຂງຂຶ້ນ
ແດ່, ເຖິງຂະໜາດທີ່ພວກເຂົາບໍ່ໄດ້ປົບ
ໜີໄປຕໍ່ໜ້າຊາວເລມັນ, ແຕ່ໄດ້ຢືນດ້ວຍ
ຄວາມກ້າຫານຕໍ່ສູ້ພວກເຂົາ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຮົາໄດ້ຕໍ່ສູ້ດ້ວຍກຳລັງທັບສາມໝື່ນ
ຄົນ ຕ້ານກັບກຳລັງທັບຫ້າໝື່ນຄົນ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້
ຢືນຕໍ່ສູ້ດ້ວຍຄວາມໝັ້ນຄົງ ຈົນວ່າພວກ
ເຂົາໄດ້ໜີໄປຕໍ່ໜ້າພວກເຮົາ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຂົາກຳລັງໜີໄປນັ້ນ ພວກເຮົາໄດ້
ໄລ່ຕິດຕາມໄປດ້ວຍກຳລັງທັບຂອງພວກ
ເຮົາ, ແລະ ໄດ້ພົບກັບພວກເຂົາອີກ, ແລະ
ໄດ້ເອົາຊະນະພວກເຂົາ; ເຖິງຢ່າງໃດກໍ
ຕາມ ພະລັງຂອງພຣະຜູ້ເປັນເຈົ້າກໍບໍ່ໄດ້
ຢູ່ກັບພວກເຮົາ; ແທ້ຈິງແລ້ວ, ພວກເຮົາ
ໄດ້ໃຊ້ກຳລັງຂອງຕົນເອງ, ເພາະພຣະວິນ
ຍານຂອງພຣະຜູ້ເປັນເຈົ້າບໍ່ໄດ້ສະຖິດຢູ່
ກັບພວກເຮົາ; ສະນັ້ນ ພວກເຮົາຈຶ່ງກັບມາ
ອ່ອນແອຄືກັນກັບພີ່ນ້ອງຂອງພວກເຮົາ.
27 ແລະ ໃຈຂອງຂ້າພະເຈົ້າເສົ້າສະ
ຫລົດຍ້ອນວ່າຄວາມສູນເສຍອັນໃຫຍ່
ຫລວງຂອງຜູ້ຄົນຂອງຂ້າພະເຈົ້າ, ເພາະ
ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງ

18 ກ ຄມພ ແຜ່ນຈາລຶກ.
19 ກ ມຊຢ 23:22; ອທ 4:19.
23 ກ ມຊຢ 20:11; ແອວ 43:45.

ຂອງພວກເຂົາ. ແຕ່ຈົ່ງເບິ່ງ, ພວກເຮົາໄດ້ອອກໄປສູ້ຮົບກັບ ຊາວ ເລມັນ ແລະ ກັບພວກໂຈນແກດີອານທັນ, ຈົນວ່າພວກເຮົາໄດ້ເຂົ້າຍຶດເອົາແຜ່ນດິນມູນມໍລະດົກຂອງພວກເຮົາຄືນມາອີກ.

28 ແລະ ປີທີສາມຮ້ອຍສີ່ສິບເກົ້າໄດ້ຜ່ານພົ້ນໄປ. ແລະ ໃນປີທີສາມຮ້ອຍຫ້າສິບ ພວກເຮົາໄດ້ເຮັດຂໍ້ຕົກລົງກັບຊາວເລມັນ ແລະ ພວກໂຈນແກດີອານທັນ, ຊຶ່ງໃນນັ້ນພວກເຮົາໄດ້ແບ່ງປັນແຜ່ນດິນມູນມໍລະດົກຂອງພວກເຮົາ.

29 ແລະ ຊາວເລມັນໄດ້ມອບແຜ່ນດິນທາງເໜືອໃຫ້ແກ່ພວກເຮົາ, ແທ້ຈິງແລ້ວ, ຈົນຮອດ [ກ]ທາງແຄບ ຊຶ່ງນຳໄປສູ່ແຜ່ນດິນທາງໃຕ້. ແລະ ພວກເຮົາໄດ້ມອບແຜ່ນດິນທາງໃຕ້ທັງໝົດໃຫ້ຊາວເລມັນ.

## ບົດທີ 3

*ມໍມອນຮ້ອງການກັບໃຈຕໍ່ຊາວນີໄຟ—ພວກເຂົາໄດ້ຮັບໄຊຊະນະອັນຍິ່ງໃຫຍ່ ແລະ ອວດອ້າງໃນພະລັງຂອງຕົນເອງ—ມໍມອນປະຕິເສດບໍ່ນຳພາພວກເຂົາ, ແລະ ເພິ່ນອະທິຖານເພື່ອພວກເຂົາຢ່າງໝົດຫວັງ—ພຣະຄຳພີມໍມອນເຊື້ອເຊີນສິບສອງເຜົ່າຂອງອິດສະຣາເອນໃຫ້ເຊື່ອໃນພຣະກິດຕິຄຸນ. ປະມານ ຄ.ສ. 360–362.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນບໍ່ໄດ້ມາສູ້ຮົບອີກຈົນວ່າເວລາສິບປີຜ່ານໄປ. ແລະ ຈົ່ງເບິ່ງ, ຂ້າພະເຈົ້າໄດ້ໃຫ້ຊາວນີໄຟ, ຜູ້ຄົນຂອງຂ້າພະເຈົ້າ, ຕຽມບ້ານເມືອງ ແລະ ຕຽມອາວຸດຂອງພວກເຂົາໄວ້ສຳລັບເວລາສູ້ຮົບ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ໃຫ້ປ່າວເຕືອນຜູ້ຄົນພວກນີ້ວ່າ—ຈົ່ງກັບໃຈ, ແລະ ມາຫາເຮົາ, ແລະ ຮັບບັບຕິສະມາ, ແລະ ຈັດຕັ້ງສາດສະໜາຈັກຂອງເຮົາຂຶ້ນອີກ, ແລະ ເຈົ້າຈະໄດ້ຮັບການໄວ້ຊີວິດ.

3 ແລະ ຂ້າພະເຈົ້າໄດ້ປ່າວເຕືອນຜູ້ຄົນພວກນີ້, ແຕ່ກໍບໍ່ໄດ້ຜົນ; ແລະ ພວກເຂົາບໍ່ເຂົ້າໃຈວ່າ ແມ່ນພຣະຜູ້ເປັນເຈົ້ານີ້ແຫລະທີ່ໄວ້ຊີວິດຂອງພວກເຂົາມາຕະຫລອດ, ແລະ ໃຫ້ໂອກາດພວກເຂົາເພື່ອຈະມີການກັບໃຈ. ແລະ ຈົ່ງເບິ່ງ ພວກເຂົາໄດ້ເຮັດໃຈແຂງກະດ້າງຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກສິບປີນີ້ຜ່ານໄປ, ຊຶ່ງລວມເປັນສາມຮ້ອຍຫົກສິບປີ ນັບຕັ້ງແຕ່ການສະເດັດມາຂອງພຣະຄຣິດ, ກະສັດຊາວເລມັນໄດ້ສົ່ງສານມາຫາຂ້າພະເຈົ້າເພື່ອໃຫ້ຂ້າພະເຈົ້າຮູ້ຈັກວ່າ ພວກເຂົາກຳລັງຈະຍົກທັບມາສູ້ຮົບກັບພວກເຮົາອີກ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ໃຫ້ຜູ້ຄົນຂອງຂ້າພະເຈົ້າໄປເຕົ້າໂຮມກັນຢູ່ແຜ່ນດິນຮ້າງ, ໄປຫາເມືອງໜຶ່ງຊຶ່ງຢູ່ໃນຊາຍແດນໃກ້ກັບທາງແຄບ, ຊຶ່ງນຳໄປຫາແຜ່ນດິນທາງໃຕ້.

6 ແລະ ບ່ອນນັ້ນພວກເຮົາໄດ້ວາງກອງທັບຂອງພວກເຮົາໄວ້ເພື່ອວ່າພວກເຮົາຈະໄດ້ສະກັດກັ້ນກອງທັບຊາວເລມັນ, ເພື່ອວ່າພວກເຂົາຈະບໍ່ໄດ້ເຂົ້າມາເປັນເຈົ້າຂອງແຜ່ນດິນຕອນໃດໆຂອງພວກເຮົາ; ສະນັ້ນພວກເຮົາຈຶ່ງໄດ້ເສີມກຳລັງຕ້ານທານພວກເຂົາໄວ້ ດ້ວຍກຳລັງທັງໝົດຂອງພວກເຮົາ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທີສາມຮ້ອຍຫົກສິບເອັດ ຊາວເລມັນໄດ້

29 *ກ* ແອວ 22:32.

ຍົກ ກອງ ທັບ ລົງ ມາ ຮອດ ເມືອງ ຮ້າງ ເພື່ອ
ມາສູ້ຮົບກັບພວກເຮົາ; ແລະ ເຫດການໄດ້
ບັງເກີດຂຶ້ນຄື ໃນປີນັ້ນ ພວກເຮົາໄດ້ເອົາ
ຊະນະພວກເຂົາ, ເຖິງຂະໜາດທີ່ພວກເຂົາ
ໄດ້ ແຕກ ຖອຍ ໄປ ຫາ ແຜ່ນ ດິນ ຂອງ ພວກ
ເຂົາເອງອີກ.

8 ແລະ ໃນ ປີ ທີ ສາມ ຮ້ອຍ ຫົກ ສິບ ສອງ
ພວກເຂົາໄດ້ຍົກທັບລົງມາສູ້ຮົບອີກ. ແລະ
ພວກ ເຮົາ ໄດ້ ເອົາ ຊະນະ ພວກ ເຂົາ ອີກ,
ແລະ ໄດ້ຂ້າພວກເຂົາເປັນຈຳນວນຫລວງ
ຫລາຍ, ແລະ ໄດ້ໂຍນສົບຂອງພວກເຂົາ
ລົງໃນທະເລ.

9 ແລະ ບັດນີ້, ຍ້ອນວ່າສິ່ງຍິ່ງໃຫຍ່ຊຶ່ງ
ຊາວນີໄຟຜູ້ຄົນຂອງຂ້າພະເຈົ້າໄດ້ເຮັດໄປ,
ພວກ ເຂົາ ຈຶ່ງ ເລີ່ມຕົ້ນ [ກ]ອວດ ອ້າງ ໃນ ພະ
ລັງຂອງຕົນເອງ, ແລະ ເລີ່ມສາບານຕໍ່ຟ້າ
ສະຫວັນວ່າ ພວກເຂົາຈະແກ້ແຄ້ນດ້ວຍ
ຕົນເອງ ເພື່ອເລືອດຂອງພີ່ນ້ອງຂອງພວກ
ເຂົາຜູ້ທີ່ຖືກສັດຕູຂອງພວກເຂົາຂ້າຕາຍ.

10 ແລະ ພວກເຂົາໄດ້ສາບານໂດຍອ້າງ
ເຖິງຟ້າສະຫວັນ, ແລະ ໂດຍອ້າງເຖິງພຣະ
ທີ່ນັ່ງຂອງພຣະເຈົ້ານຳອີກ, ວ່າພວກເຂົາ
[ກ]ຈະຂຶ້ນໄປສູ້ຮົບກັບສັດຕູຂອງພວກເຂົາ,
ແລະ ຈະທຳລາຍພວກເຂົາໃຫ້ສູນສິ້ນໄປ
ຈາກແຜ່ນດິນ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄືຂ້າ
ພະເຈົ້າມໍມອນໄດ້ປະຕິເສດເດັດຂາດນັບ
ແຕ່ເວລານັ້ນໄປວ່າ ຂ້າພະເຈົ້າຈະບໍ່ເປັນ
ຜູ້ບັງຄັບບັນຊາ ແລະ ເປັນຜູ້ນຳຂອງຜູ້ຄົນ
ພວກນີ້, ເພາະຄວາມຊົ່ວຮ້າຍ ແລະ ຄວາມ
ໜ້າກຽດຊັງຂອງພວກເຂົາ.

12 ຈົ່ງ ເບິ່ງ, ຂ້າພະເຈົ້າໄດ້ນຳພາພວກ
ເຂົາຫລາຍເທື່ອມາແລ້ວໂດຍບໍ່ໄດ້ຄິດຄຳ
ນຶງເຖິງຄວາມຊົ່ວຮ້າຍຂອງພວກເຂົາ ແລະ
ໄດ້ຮັກພວກເຂົາດ້ວຍສຸດໃຈຂອງຂ້າພະ
ເຈົ້າ, ຕາມ [ກ]ຄວາມຮັກຂອງພຣະເຈົ້າຊຶ່ງ
ມີຢູ່ໃນຂ້າພະເຈົ້າ; ແລະ ຈິດວິນຍານຂອງ
ຂ້າພະເຈົ້າຫຸ້ມເທອອກມາໃນຄຳອະທິຖານ
ຫາພຣະເຈົ້າຂອງຂ້າພະເຈົ້າຕະຫລອດທັງ
ວັນເພື່ອພວກເຂົາ; ແຕ່ປານນັ້ນ ພວກເຂົາ
ກໍຍັງ [ຂ]ບໍ່ມີສັດທາ, ຍ້ອນວ່າຄວາມແຂງກະ
ດ້າງຂອງໃຈຂອງພວກເຂົາ.

13 ແລະ ສາມເທື່ອທີ່ຂ້າພະເຈົ້າໄດ້ປົດ
ປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູ
ຂອງພວກເຂົາ, ແຕ່ພວກເຂົາກໍຍັງບໍ່ໄດ້ກັບ
ໃຈຈາກບາບຂອງພວກເຂົາເລີຍ.

14 ແລະ ເວລາພວກເຂົາ [ກ]ສາບານໂດຍ
ອ້າງເຖິງທຸກສິ່ງທຸກຢ່າງທີ່ພຣະຜູ້ເປັນເຈົ້າ
ແລະ ພຣະຜູ້ຊ່ວຍໃຫ້ລອດ ພຣະເຢຊູຄຣິດ
ຂອງພວກເຮົາຊົງຫ້າມ, ວ່າພວກເຂົາຈະ
ຂຶ້ນໄປຫາສັດຕູເພື່ອສູ້ຮົບ ແລະ ແກ້ແຄ້ນ
ດ້ວຍຕົນເອງ ແທນເລືອດຂອງພີ່ນ້ອງຂອງ
ພວກເຂົາ, ຈົ່ງເບິ່ງ ສຸລະສຽງຂອງພຣະຜູ້
ເປັນເຈົ້າໄດ້ມາຫາຂ້າພະເຈົ້າ, ມີຄວາມວ່າ:

15 [ກ]ການແກ້ແຄ້ນເປັນຂອງເຮົາ, ແລະ
ເຮົາຈະ [ຂ]ຕອບໂຕ້ໃຫ້; ແລະ ເປັນຍ້ອນວ່າ
ຜູ້ຄົນພວກນີ້ບໍ່ໄດ້ກັບໃຈຫລັງຈາກທີ່ເຮົາ
ໄດ້ປົດປ່ອຍພວກເຂົາ, ຈົ່ງເບິ່ງ, ພວກເຂົາ
ຈະຖືກທຳລາຍໃຫ້ສູນສິ້ນໄປອອກຈາກພື້ນ
ແຜ່ນດິນໂລກ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ປະຕິເສດຢ່າງເດັດຂາດວ່າ ຂ້າ
ພະເຈົ້າຈະບໍ່ຂຶ້ນໄປສູ້ຮົບກັບສັດຕູຂອງຂ້າ
ພະເຈົ້າ; ແລະ ຂ້າພະເຈົ້າໄດ້ເຮັດຕາມຄຳ
ບັນຊາຂອງພຣະຜູ້ເປັນເຈົ້າ; ແລະ ຂ້າພະ
ເຈົ້າໄດ້ຢືນເປັນພະຍານເປັນຄົນກາງ ເພື່ອ

**3** 9*ກ* 2 ນຟ 4:34.
10*ກ* 3 ນຟ 3:20–21; ມມ 4:4.
12*ກ* ຄນພ ຮັກ, ຄວາມຮັກ.
*ຂ* ມມ 5:2.
14*ກ* 3 ນຟ 12:34–37.
15*ກ* ຄນພ ແກ້ແຄ້ນ, ການແກ້ແຄ້ນ.
*ຂ* ຄພ 82:23.

ສະແດງ ໃຫ້ ປະຈັກ ແກ່ ໂລກ ເຖິງ ສິ່ງ ທີ່ ຂ້າ
ພະເຈົ້າໄດ້ເຫັນ ແລະ ໄດ້ຍິນມາຕາມການ
ສະແດງໃຫ້ປະຈັກຂອງພຣະວິນຍານ ຊຶ່ງ
ໄດ້ໃຫ້ຫລັກຖານກ່ຽວກັບສິ່ງທີ່ຈະມາເຖິງ.
17 ສະນັ້ນ ຂ້າພະເຈົ້າຈຶ່ງຂຽນ [ກ]ຫາທ່ານ
ຜູ້ເປັນຄົນຕ່າງຊາດ, ແລະ ຫາທ່ານຜູ້ເປັນ
ເຊື້ອສາຍອິດສະຣາເອນນຳອີກ, ເມື່ອເຖິງ
ເວລາທີ່ວຽກງານຈະເລີ່ມຕົ້ນ, ວ່າທ່ານຈະ
ຕຽມພ້ອມເພື່ອກັບຄືນໄປຫາແຜ່ນດິນມູນມໍ
ລະດົກຂອງທ່ານ;
18 ແທ້ ຈິງ ແລ້ວ, ຈົ່ງ ເບິ່ງ, ຂ້າ ພະ ເຈົ້າ
ຂຽນຫາທີ່ສຸດຂອງແຜ່ນດິນໂລກ; ແທ້ຈິງ
ແລ້ວ, ຂຽນຫາທ່ານຜູ້ເປັນສິບສອງເຜົ່າ
ຂອງອິດສະຣາເອນ, ຜູ້ທີ່ຈະໄດ້ຮັບ [ກ]ການ
ຕັດສິນຕາມວຽກງານຂອງທ່ານໂດຍຄົນ
ສິບສອງເຜົ່າ ຊຶ່ງພຣະເຢຊູໄດ້ເລືອກໄວ້
ໃຫ້ເປັນສານຸສິດຂອງພຣະອົງໃນແຜ່ນດິນ
ເຢຣູຊາເລັມ.
19 ແລະ ຂ້າ ພະ ເຈົ້າ ໄດ້ ຂຽນ ຫາ ຜູ້ ທີ່
ເຫລືອຢູ່ຂອງຜູ້ຄົນພວກນີ້ອີກ, ຜູ້ທີ່ຈະຮັບ
ການຕັດສິນ ໂດຍຄົນ [ກ]ສິບສອງຄົນ ຜູ້ທີ່
ພຣະເຢຊູໄດ້ເລືອກໄວ້ໃນແຜ່ນດິນນີ້; ແລະ
ພວກເຂົາກໍຈະໄດ້ຮັບການຕັດສິນຈາກຄົນ
ສິບສອງຄົນ ຊຶ່ງພຣະເຢຊູໄດ້ເລືອກໄວ້ໃນ
ແຜ່ນດິນເຢຣູຊາເລັມນຳອີກ.
20 ແລະ ພຣະວິນຍານໄດ້ສະແດງສິ່ງ
ເຫລົ່ານີ້ໃຫ້ປະຈັກແກ່ຂ້າພະເຈົ້າ; ສະນັ້ນ
ຂ້າພະເຈົ້າຈຶ່ງຂຽນຫາທ່ານທຸກຄົນ. ແລະ
ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງຂຽນຫາທ່ານ
ເພື່ອທ່ານຈະໄດ້ຮູ້ຈັກວ່າ ທ່ານທຸກຄົນຈະ
ຕ້ອງຢືນຢູ່ຕໍ່ໜ້າ [ກ]ບັນລັງພິພາກສາຂອງ
ພຣະຄຣິດ, ແທ້ຈິງແລ້ວ, ທຸກຄົນທີ່ເປັນ
ເຊື້ອສາຍ ແລະ ເປັນ [ຂ]ຄອບຄົວມະນຸດ
ຂອງອາດາມ; ແລະ ວ່າທຸກຄົນຈະຕ້ອງຢືນ
ຮັບການຕັດສິນຕາມຜົນງານຂອງທ່ານ, ບໍ່
ວ່າມັນຈະດີ ຫລື ຊົ່ວ;
21 ແລະ ເພື່ອທ່ານຈະໄດ້ [ກ]ເຊື່ອໃນພຣະ
ກິດຕິຄຸນຂອງພຣະເຢຊູຄຣິດ, ຊຶ່ງທ່ານຈະ
ມີມັນຢູ່ໃນບັນດາພວກທ່ານ; ແລະ ເພື່ອວ່າ
[ຂ]ຊາວຢິວ ຜູ້ຄົນ ແຫ່ງພັນທະສັນຍາຂອງ
ພຣະຜູ້ເປັນເຈົ້າຈະໄດ້ມີ [ຄ]ພະຍານອື່ນອີກ
ນອກຈາກພຣະອົງ ຜູ້ທີ່ພວກເຂົາໄດ້ເຫັນ
ແລະ ໄດ້ຍິນ, ວ່າພຣະເຢຊູຜູ້ທີ່ພວກເຂົາ
ຂ້າ, ຄື [ງ]ພຣະຄຣິດອົງນັ້ນ ແລະ ພຣະເຈົ້າ
ອົງນັ້ນ.
22 ແລະ ຂ້າພະເຈົ້າປາດຖະໜາທີ່ຈະ
ຊັກຊວນທ່ານ [ກ]ທັງຫລາຍທີ່ສຸດຂອງແຜ່ນ
ດິນໂລກໃຫ້ກັບໃຈ ແລະ ຕຽມຕົວເພື່ອຢືນ
ຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ.

## ບົດທີ 4

*ສົງຄາມ ແລະ ການຂ້າຟັນລັນແທງເກີດຂຶ້ນຕໍ່ໄປ—ຄົນຊົ່ວທຳລາຍຄົນຊົ່ວ—ຄວາມຊົ່ວຮ້າຍເກີດຂຶ້ນຊຶ່ງຮ້າຍແຮງກວ່າທີ່ເຄີຍເປັນມາໃນອິດສະຣາເອນທັງໝົດ—ພວກຜູ້ຍິງ ແລະ ເດັກນ້ອຍຖືກມອບໃຫ້ເປັນເຄື່ອງຖວາຍແກ່ຮູບບູຊາ—ຊາວເລມັນເລີ່ມກຳຈັດຊາວນີໄຟຢູ່ຕໍ່ໜ້າພວກເຂົາ. ປະມານ ຄ.ສ. 363–375.*

1 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນ
ປີທີສາມຮ້ອຍຫົກສິບສາມ ຊາວນີໄຟໄດ້

17 *ກ* 2 ນຟ 30:3–8; 3 ນຟ 29:1.
18 *ກ* ມທ 19:28; ລກ 22:29–30; ຄພ 29:12.
19 *ກ* 1 ນຟ 12:9–10.
20 *ກ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຂ* ຄພ 27:11.
21 *ກ* ຄພ 3:20.
*ຂ* ຄມພ ຊາວຢິວ.
*ຄ* 2 ນຟ 25:18.
*ງ* 2 ນຟ 26:12; ມຊຍ 7:27.
22 *ກ* ແອວ 29:1.

ຍົກກອງທັບຂອງພວກເຂົາອອກຈາກແຜ່ນ
ດິນຮ້າງຂຶ້ນໄປສູ້ຮົບກັບຊາວເລມັນ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງ
ທັບຂອງຊາວນີໄຟໄດ້ຖືກຂັບໄລ່ຄືນມາຍັງ
ແຜ່ນດິນຮ້າງອີກ. ແລະ ເວລາທີ່ພວກເຂົາ
ຍັງອິດເມື່ອຍຢູ່ນັ້ນ, ກອງທັບຊຶ່ງຍັງສົດຊື່ນ
ຢູ່ຂອງຊາວເລມັນໄດ້ເຂົ້າມາໂຈມຕີພວກ
ເຂົາ; ແລະ ພວກເຂົາໄດ້ຕໍ່ສູ້ກັນຢ່າງຮຸນ
ແຮງ, ເຖິງຂະໜາດທີ່ຊາວເລມັນເຂົ້າເປັນ
ເຈົ້າຂອງເມືອງຮ້າງ, ແລະ ໄດ້ຂ້າຊາວນີໄຟ
ເປັນຈຳນວນຫລວງຫລາຍ, ທັງໄດ້ຈັບຊາວ
ນີໄຟໄປເປັນຊະເລີຍເປັນຈຳນວນຫລວງ
ຫລາຍ.
3 ແລະ ພວກທີ່ເຫລືອຕາຍໄດ້ໜີໄປຢູ່
ກັບຜູ້ອາໄສຢູ່ໃນເມືອງທີອານຄຳ. ບັດນີ້
ເມືອງທີອານຄຳນີ້ຕັ້ງຢູ່ໃນຊາຍແດນໃກ້ຝັ່ງ
ທະເລ; ແລະ ມັນກໍຢູ່ໃກ້ເມືອງຮ້າງອີກ.
4 ແລະ [a]ຍ້ອນວ່າກອງທັບຂອງຊາວ
ນີໄຟຍົກທັບຂຶ້ນໄປຕີຊາວເລມັນ ຈຶ່ງເຮັດ
ໃຫ້ພວກເຂົາຖືກຟາດຟັນ; ເພາະຖ້າຫາກ
ບໍ່ແມ່ນຍ້ອນການຍົກທັບໄປຕີນັ້ນ, ຊາວ
ເລມັນຈະບໍ່ມີອຳນາດເໜືອພວກເຂົາໄດ້.
5 ແຕ່ຈົ່ງເບິ່ງ, ການພິພາກສາຂອງພຣະ
ເຈົ້າຈະຕາມທັນຄົນຊົ່ວ; ແລະ ມັນແມ່ນຄົນ
ຊົ່ວທີ່ຖືກຄົນຊົ່ວ [a]ລົງໂທດ; ເພາະມັນແມ່ນ
ຄົນຊົ່ວນີ້ແຫລະທີ່ຍຸຍົງໃຈຂອງລູກຫລານ
ມະນຸດໃຫ້ຂ້າຟັນກັນ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ
ເລມັນໄດ້ຕຽມພ້ອມເພື່ອຈະໄດ້ຍົກກອງ
ທັບມາຕີເອົາເມືອງທີອານຄຳ.
7 ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີ
ສາມຮ້ອຍຫົກສິບສີ່ ຊາວເລມັນໄດ້ຍົກທັບ
ມາຕີເມືອງທີອານຄຳ ເພື່ອຈະໄດ້ເປັນເຈົ້າ
ຂອງເມືອງທີອານຄຳນຳອີກ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາຖືກຊາວນີໄຟຕີໂຕ້ຕອບ ແລະ ຂັບໄລ່
ກັບຄືນໄປ. ແລະ ເມື່ອຊາວນີໄຟເຫັນວ່າ
ຕົນໄດ້ຂັບໄລ່ຊາວເລມັນກັບຄືນໄປ, ພວກ
ເຂົາກໍໄດ້ອວດອ້າງພະລັງຂອງຕົນອີກ;
ແລະ ພວກເຂົາໄດ້ຍົກທັບອອກໄປດ້ວຍ
ສຸດກຳລັງຂອງຕົນ, ແລະ ເຂົ້າຍຶດເອົາ
ເມືອງຮ້າງຄືນມາອີກ.
9 ແລະ ບັດນີ້ເລື່ອງທັງໝົດນີ້ໄດ້ເກີດຂຶ້ນ
ແລ້ວ, ແລະ ທັງສອງຝ່າຍມີຄົນນັບເປັນ
ຫລາຍພັນຖືກຂ້າຕາຍ, ທັງຊາວນີໄຟ ແລະ
ຊາວເລມັນ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ປີ
ທີສາມຮ້ອຍຫົກສິບຫົກໄດ້ຜ່ານໄປ, ແລະ
ຊາວເລມັນໄດ້ຍົກທັບມາສູ້ຮົບກັບຊາວ
ນີໄຟອີກ; ແຕ່ຊາວນີໄຟກໍບໍ່ໄດ້ກັບໃຈຈາກ
ຄວາມຊົ່ວທີ່ພວກເຂົາເຮັດໄປນັ້ນ, ແລະ
ຍັງຄົງຈົມຢູ່ໃນຄວາມຊົ່ວຮ້າຍຂອງພວກ
ເຂົາຢູ່ຕະຫລອດເວລາ.
11 ແລະ ມັນເປັນໄປບໍ່ໄດ້ສຳລັບລີ້ນທີ່
ຈະບັນລະຍາຍ, ຫລື ສຳລັບມະນຸດທີ່ຈະ
ຂຽນຄຳບັນລະຍາຍຢ່າງບໍລິບູນເຖິງພາບ
ອັນໜ້າຫວາດກົວຂອງເລືອດ ແລະ ການ
ຂ້າຟັນຊຶ່ງມີຢູ່ໃນບັນດາຜູ້ຄົນ, ທັງຂອງ
ຊາວນີໄຟ ແລະ ຊາວເລມັນ; ແລະ ໃຈທຸກ
ດວງແຂງກະດ້າງຈົນເບີກບານໃນການ
ຫລັ່ງເລືອດຢູ່ຕະຫລອດເວລາ.
12 ແລະ ຕາມພຣະຄຳຂອງພຣະຜູ້ເປັນ
ເຈົ້າແລ້ວ ມັນບໍ່ເຄີຍມີ [a]ຄວາມຊົ່ວຮ້າຍ
ຢ່າງໃຫຍ່ຫລວງເຊັ່ນນີ້ມາກ່ອນເລີຍໃນ
ບັນດາລູກຫລານຂອງລີໄຮ, ຫລື ແມ່ນ
ແຕ່ໃນບັນດາເຊື້ອສາຍອິດສະຣາເອນທັງ
ໝົດ, ດັ່ງທີ່ເປັນຢູ່ໃນບັນດາຜູ້ຄົນພວກນີ້.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວ

**4** 4*ກ* ມມ 3:10.
5*ກ* ຄພ 63:33.
12*ກ* ປຖກ 6:5;
3 ນຟ 9:9.

ເລມັນ ໄດ້ ເຂົ້າ ເປັນ ເຈົ້າ ຂອງ ເມືອງ ຮ້າງ, ແລະ ນີ້ເພາະວ່າ [ກ]ຈຳນວນຄົນຂອງພວກເຂົາມີ ຫລາຍ ກວ່າ ຈຳນວນ ຄົນ ຂອງ ຊາວນີໄຟ.

14 ແລະ ພວກ ເຂົາ ໄດ້ ເດີນ ທັບ ມຸ້ງ ໜ້າໄປຕີເອົາເມືອງທີອານຄຳອີກ, ແລະ ໄດ້ຂັບໄລ່ຜູ້ອາໄສອອກຈາກເມືອງນັ້ນໄປ, ແລະໄດ້ຈັບເອົາຫລາຍຄົນໄປເປັນຊະເລີຍເສິກລວມທັງພວກຜູ້ຍິງ ແລະ ເດັກນ້ອຍ, ແລະໄດ້ ມອບ ພວກ ເຂົາ ເປັນ ເຄື່ອງ ຖວາຍ ແກ່ພຣະເຈົ້າທີ່ເປັນ [ກ]ຮູບບູຊາຂອງພວກເຂົາ.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທີສາມຮ້ອຍຫົກສິບເຈັດ, ຊາວນີໄຟໂດຍທີ່ມີຄວາມຄຽດແຄ້ນຫລາຍທີ່ສຸດຍ້ອນວ່າຊາວເລມັນໄດ້ເອົາພວກຜູ້ຍິງ ແລະ ເດັກນ້ອຍຂອງພວກເຂົາໄປເປັນເຄື່ອງຖວາຍ, ພວກເຂົາຈຶ່ງໄດ້ຍົກທັບໄປສູ້ຮົບກັບຊາວເລມັນດ້ວຍຄວາມຄຽດແຄ້ນທີ່ສຸດ, ເຖິງຂະໜາດທີ່ພວກເຂົາໄດ້ເອົາຊະນະຊາວເລມັນ, ແລະ ໄດ້ຂັບໄລ່ພວກເຂົາອອກຈາກແຜ່ນດິນຂອງຕົນໄປ.

16 ແລະ ຊາວເລມັນບໍ່ໄດ້ຍົກທັບມາຕີຊາວນີໄຟອີກ ຈົນຮອດປີທີສາມຮ້ອຍເຈັດສິບຫ້າ.

17 ແລະ ໃນປີນີ້ພວກເຂົາໄດ້ຍົກທັບລົງມາ ຕີ ຊາວ ນີໄຟ ດ້ວຍ ກຳ ລັງທັງໝົດ ຂອງພວກເຂົາ; ແລະ ບໍ່ໄດ້ນັບຈຳນວນຄົນຂອງພວກເຂົາ ເພາະຄວາມຫລວງຫລາຍຂອງຈຳນວນຂອງພວກເຂົາ.

18 ແລະ [ກ]ນັບແຕ່ເວລານີ້ໄປ ຊາວນີໄຟບໍ່ ໄດ້ ມີ ອຳນາດ ເໜືອຊາວເລມັນອີກ, ແຕ່ເລີ່ມຖືກພວກເຂົາກວາດລ້າງຕົນຄືກັນກັບນ້ຳຄ້າງຢູ່ຕໍ່ໜ້າດວງຕາເວັນ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ຍົກທັບລົງມາຕີເມືອງຮ້າງ; ແລະມັນໄດ້ມີການສູ້ຮົບກັນຢ່າງຮຸນແຮງທີ່ສຸດໃນແຜ່ນດິນຮ້າງ, ຊຶ່ງໃນການສູ້ຮົບນີ້ພວກເຂົາໄດ້ເອົາຊະນະຊາວນີໄຟ.

20 ແລະ ພວກ ເຂົາ ໄດ້ໜີໄປທາງໜ້າພວກເຂົາອີກ, ແລະ ພວກເຂົາໄດ້ມາຮອດເມືອງໂບອາດ; ແລະ ບ່ອນນັ້ນພວກເຂົາໄດ້ຕັ້ງຫລັກຕໍ່ສູ້ຊາວເລມັນດ້ວຍຄວາມອາດຫານ, ເຖິງຂະໜາດທີ່ຊາວເລມັນບໍ່ໄດ້ເອົາຊະນະພວກເຂົາ ຈົນວ່າຊາວເລມັນໄດ້ຍົກທັບມາອີກເປັນເທື່ອທີສອງ.

21 ແລະ ເມື່ອພວກເຂົາຍົກທັບມາເປັນເທື່ອທີສອງ, ຊາວນີໄຟຈຶ່ງຖືກຂັບໄລ່ ແລະຖືກຂ້າຟັນອີກ ຊຶ່ງເປັນການຂ້າຟັນທີ່ໃຫຍ່ຫລວງທີ່ສຸດ; ພວກແມ່ຍິງ ແລະ ເດັກນ້ອຍຂອງພວກ ເຂົາ ໄດ້ ຖືກ ເອົາ ໄປ ເປັນ ເຄື່ອງຖວາຍແກ່ຮູບບູຊາອີກ.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟໄດ້ປົບໜີໄປຈາກພວກເຂົາອີກ, ໂດຍໄດ້ເອົາຜູ້ອາໄສຢູ່ໃນເມືອງນັ້ນທັງໝົດໄປນຳ, ລວມທັງຜູ້ທີ່ຢູ່ໃນຕົວເມືອງ ແລະ ຢູ່ໃນໝູ່ບ້ານຕ່າງໆ.

23 ແລະ ບັດນີ້ຂ້າພະເຈົ້າມໍມອນໂດຍທີ່ເຫັນວ່າຊາວເລມັນກຳລັງຈະລົບລ້າງແຜ່ນດິນ, ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ໄປຫາເນີນພູ[ກ]ຊິມ, ແລະ ໄດ້ເອົາບັນທຶກທັງໝົດຊຶ່ງອາມມາຣອນໄດ້ເຊື່ອງໄວ້ກັບພຣະຜູ້ເປັນເຈົ້ານັ້ນຂຶ້ນມາ.

## ບົດທີ 5

*ມໍມອນ ນຳ ພາ ກອງທັບ ຊາວ ນີໄຟ ອີກ ໃນສະ ໜາມ ຮົບ ອັນ ນອງ ເລືອດ ແລະ ເຕັມໄປດ້ວຍການຂ້າຟັນລັນແທງ—ພຣະຄຳ*

13 *ກ* ມມ 5:6.
14 *ກ* ຄມພ ການນັບຖືຮູບບູຊາ.
18 *ກ* ມມ 3:3.
23 *ກ* ມມ 1:3.

*ພິມໍມອນຈະອອກມາເພື່ອໃຫ້ຊາວອິດສະຣາເອນທຸກຄົນແນ່ໃຈວ່າພຣະເຢຊູຄືພຣະຄຣິດ—ຊາວເລມັນຈະເປັນຄົນຜິວດຳ, ສົກກະປົກ, ແລະ ໜ້າກຽດຊັງ—ພວກເຂົາຈະໄດ້ຮັບພຣະກິດຕິຄຸນຈາກຄົນຕ່າງຊາດໃນຍຸກສຸດທ້າຍ. ປະມານ ຄ.ສ. 375–384.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ອອກໄປໃນບັນດາຊາວນີໄຟ, ແລະ ໄດ້ຖອນ [ກ]ຄຳສາບານຄືນ ຊຶ່ງຂ້າພະເຈົ້າເຮັດໄວ້ວ່າ ຂ້າພະເຈົ້າຈະບໍ່ຊ່ວຍເຫລືອພວກເຂົາອີກຕໍ່ໄປ; ແລະ ພວກເຂົາໄດ້ມອບອຳນາດບັນຊາກອງທັບທະຫານຂອງພວກເຂົາໃຫ້ຂ້າພະເຈົ້າຄືນ, ເພາະວ່າພວກເຂົາເບິ່ງຂ້າພະເຈົ້າຄືກັບວ່າ ຂ້າພະເຈົ້າສາມາດປົດປ່ອຍພວກເຂົາຈາກຄວາມທຸກຂອງພວກເຂົາໄດ້.

2 ແລະ ຈົ່ງເບິ່ງ, ຂ້າພະເຈົ້າ [ກ]ບໍ່ມີຄວາມຫວັງເລີຍ ເພາະວ່າຂ້າພະເຈົ້າຮູ້ຈັກເຖິງການຕັດສິນຂອງພຣະຜູ້ເປັນເຈົ້າ ຊຶ່ງຈະມາຫາພວກເຂົາ; ເພາະພວກເຂົາບໍ່ໄດ້ກັບໃຈຈາກຄວາມຊົ່ວຮ້າຍຂອງພວກເຂົາ, ແຕ່ໄດ້ພາກັນດີ້ນລົນເພື່ອຊີວິດຂອງຕົນຕາມລຳພັງໂດຍບໍ່ມີການເອີ້ນຫາພຣະອົງຜູ້ໄດ້ສ້າງພວກເຂົາມາ.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ຍົກທັບມາຕີພວກເຮົາໃນຂະນະທີ່ພວກເຮົາກຳລັງໜີໄປຫາເມືອງຈໍແດນ; ແຕ່ຈົ່ງເບິ່ງ, ພວກເຂົາໄດ້ຖືກຂັບໄລ່ກັບຄືນໄປ ຈົນວ່າພວກເຂົາຍຶດເອົາເມືອງບໍ່ໄດ້ໃນເວລານັ້ນ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ຍົກທັບມາຕີອີກ, ແລະ ພວກເຮົາໄດ້ຮັກສາເມືອງໄວ້ໄດ້. ແລະ ມີເມືອງອື່ນໆອີກທີ່ຊາວນີໄຟຮັກສາໄວ້ ຊຶ່ງເປັນທີ່ໝັ້ນເພື່ອປ້ອງກັນບໍ່ໃຫ້ຊາວເລມັນເຂົ້າມາໃນແຜ່ນດິນ ຊຶ່ງຢູ່ທາງໜ້າຂອງພວກເຮົາໄດ້, ເພື່ອເຂົ້າມາທຳລາຍຜູ້ອາໄສຢູ່ໃນແຜ່ນດິນຂອງພວກເຮົາ.

5 ແຕ່ເຫດການໄດ້ບັງເກີດຂຶ້ນຄື ບ້ານເມືອງບ່ອນໃດກໍຕາມທີ່ພວກເຮົາຜ່ານໄປ, ແລະ ບໍ່ໄດ້ເຕົ້າໂຮມຜູ້ອາໄສຢູ່ໃນນັ້ນເຂົ້າກັນ, ກໍຖືກຊາວເລມັນທຳລາຍໝົດ, ທັງຕົວເມືອງ ແລະ ໝູ່ບ້ານ, ແລະ ເມືອງໃຫຍ່ກໍຖືກເຜົາດ້ວຍໄຟ; ແລະ ເວລາສາມຮ້ອຍເຈັດສິບເກົ້າປີໄດ້ຜ່ານໄປດັ່ງນີ້.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທີສາມຮ້ອຍແປດສິບ ຊາວເລມັນໄດ້ຍົກທັບມາສູ້ຮົບກັບພວກເຮົາອີກ, ແລະ ພວກເຮົາໄດ້ຢືນຕໍ່ສູ້ພວກເຂົາຢ່າງອາດຫານ, ແຕ່ບໍ່ມີປະໂຫຍດ ເພາະວ່າພວກເຂົາມີຈຳນວນຫລວງຫລາຍ ຈົນວ່າພວກເຂົາໄດ້ຢຽບຢ່ຳຜູ້ຄົນຂອງຊາວນີໄຟໄວ້ໃຕ້ຕີນຂອງພວກເຂົາ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ປົບໜີໄປອີກ, ແລະ ຜູ້ໃດທີ່ປົບໜີໄວກວ່າຊາວເລມັນກໍໜີລອດ, ແລະ ຜູ້ທີ່ໜີບໍ່ທັນກໍຖືກຊາວເລມັນກວາດລ້າງ ແລະ ຖືກທຳລາຍໄປ.

8 ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າມໍມອນບໍ່ປາດຖະໜາທີ່ຈະທໍລະມານຈິດວິນຍານຂອງມະນຸດໂດຍນຳເອົາພາບຂອງເລືອດ ແລະ ການຂ້າຟັນອັນເປັນຕາຢ້ານເຊັ່ນນີ້ທີ່ຢູ່ຕໍ່ໜ້າຂອງຂ້າພະເຈົ້າມາໂຍນໃສ່ຕໍ່ໜ້າມະນຸດ; ແຕ່ຂ້າພະເຈົ້າຮູ້ວ່າສິ່ງເຫລົ່ານີ້ຈະຕ້ອງເປັນທີ່ຮູ້ຈັກຢ່າງແນ່ນອນ, ແລະ ວ່າທຸກສິ່ງທຸກຢ່າງທີ່ລີ້ຊ່ອນຢູ່ຈະຕ້ອງຖືກ [ກ]ເປີດເຜີຍໃນທ່າມກາງປວງຊົນ—

**5** 1 *ກ* ມມ 3:11.
2 *ກ* ມມ 3:12.
8 *ກ* ລກ 12:2–3;
2 ນຟ 27:11;
ຄພ 1:3.

9 ແລະ ເລື່ອງເຫລົ່ານີ້ກໍຈະ [ກ]ເປັນທີ່ຮູ້ຈັກ
ແກ່ຜູ້ທີ່ເຫລືອຢູ່ຂອງຜູ້ຄົນເຫລົ່ານີ້ນຳອີກ,
ແລະ ມາຫາຄົນຕ່າງຊາດນຳ ອີກ, ຜູ້ຊຶ່ງ
ພຣະຜູ້ເປັນເຈົ້າກ່າວວ່າຈະເຮັດໃຫ້ພວກ
ເຂົາເປັນຜູ້ເຮັດໃຫ້ຜູ້ຄົນພວກນີ້ແຕກ [ຂ]ກະ
ຈັດກະຈາຍໄປ, ແລະ ພວກເຂົາຈະນັບ
ວ່າຜູ້ຄົນພວກນີ້ບໍ່ມີຄຸນຄ່າອັນໃດໝົດ—
ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ [ຄ]ຂຽນໄວ້ໂດຍ
ຫຍໍ້ ແລະ ບໍ່ກ້າໃຫ້ເລື່ອງລາວອັນຄົບຖ້ວນ
ກ່ຽວກັບສິ່ງທີ່ຂ້າພະເຈົ້າໄດ້ເຫັນມາ, ເພາະ
ພຣະບັນຊາຊຶ່ງຂ້າພະເຈົ້າໄດ້ຮັບມາ, ແລະ
ເພື່ອວ່າພວກທ່ານຈະບໍ່ໄດ້ມີຄວາມເສົ້າສະ
ຫລົດໃຈເກີນໄປເພາະຄວາມຊົ່ວຮ້າຍຂອງ
ຜູ້ຄົນພວກນີ້.
10 ແລະ ບັດນີ້ຈົ່ງເບິ່ງ, ເລື່ອງນີ້ຂ້າພະ
ເຈົ້າໄດ້ເວົ້າກັບລູກຫລານຂອງພວກເຂົາ,
ແລະ ກັບຄົນຕ່າງຊາດຜູ້ທີ່ມີຄວາມເອົາໃຈ
ໃສ່ຕໍ່ເຊື້ອສາຍອິດສະຣາເອນນຳອີກ, ເພື່ອ
ໃຫ້ເຂົ້າໃຈ ແລະ ຮູ້ຈັກວ່າພອນຂອງພວກ
ເຂົານັ້ນມາຈາກໃສ.
11 ເພາະຂ້າພະເຈົ້າຮູ້ວ່າຄົນເຊັ່ນນັ້ນຈະ
ເສົ້າສະຫລົດໃຈເພາະຄວາມສູນເສຍຂອງ
ເຊື້ອສາຍອິດສະຣາເອນ; ແທ້ຈິງແລ້ວ,
ພວກເຂົາຈະເສົ້າສະຫລົດໃຈຍ້ອນວ່າ
ຄວາມພິນາດຂອງຜູ້ຄົນພວກນີ້; ພວກເຂົາ
ຈະເສົ້າສະຫລົດໃຈທີ່ຜູ້ຄົນພວກນີ້ບໍ່ກັບໃຈ
ເພື່ອວ່າພວກເຂົາຈະໄດ້ຖືກກອດຮັດໄວ້ໃນ
ອ້ອມພຣະພາຫາຂອງພຣະເຢຊູ.
12 ບັດນີ້ [ກ]ເລື່ອງເຫລົ່ານີ້ມີຂຽນໄວ້ເຖິງ
[ຂ]ຜູ້ທີ່ເຫລືອຢູ່ຂອງເຊື້ອສາຍຂອງຢາໂຄບ;
ແລະ ມັນຖືກຂຽນໄວ້ຕາມວິທີນີ້ເພາະພຣະ
ເຈົ້າຮູ້ວ່າຄວາມຊົ່ວຮ້າຍຈະບໍ່ນຳມັນອອກ
ມາໃຫ້ພວກເຂົາ; ແລະ ມັນຈະຖືກ [ຄ]ເຊື່ອງ
ໄວ້ກັບພຣະຜູ້ເປັນເຈົ້າ ເພື່ອມັນຈະໄດ້ອອກ
ມາໃນເວລາອັນເໝາະສົມຂອງພຣະອົງ.
13 ແລະ ນີ້ຄືພຣະບັນຊາຊຶ່ງຂ້າພະເຈົ້າ
ໄດ້ຮັບມາ; ແລະ ຈົ່ງເບິ່ງ, ມັນຈະອອກ
ມາຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ
ເມື່ອພຣະອົງເຫັນວ່າສົມຄວນໃນຄວາມ
ສະຫລຽວສະຫລາດຂອງພຣະອົງ.
14 ແລະ ຈົ່ງເບິ່ງ, ມັນຈະອອກໄປຫາ
[ກ]ຊາວຢິວຜູ້ທີ່ບໍ່ເຊື່ອ; ແລະ ເພາະເຈດຕະ
ນານີ້ມັນຈະອອກໄປ—ເພື່ອມັນຈະໄດ້
[ຂ]ຊັກຊວນພວກເຂົາໃຫ້ເຊື່ອວ່າພຣະເຢຊູ
ຄືພຣະຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງ
ພຣະຊົນຢູ່; ເພື່ອພຣະບິດາຈະໄດ້ນຳຈຸດ
ປະສົງອັນຍິ່ງໃຫຍ່ ແລະ ນິລັນດອນຂອງ
ພຣະອົງມາໂດຍທາງພຣະບຸດທີ່ຮັກຂອງ
ພຣະອົງ, ໃນການນຳເອົາຊາວຢິວ ຫລື
ເຊື້ອສາຍອິດສະຣາເອນທັງໝົດກັບຄືນ
ຫາແຜ່ນດິນມູນມໍລະດົກຂອງພວກເຂົາ,
ຊຶ່ງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາປະທານໃຫ້, ເພື່ອເປັນການເຮັດ
ໃຫ້ [ຄ]ພັນທະສັນຍາຂອງພຣະອົງສຳເລັດ;
15 ແລະ ເພື່ອລູກຫລານຂອງ [ກ]ຜູ້ຄົນ
ພວກນີ້ຈະໄດ້ມີຄວາມເຊື່ອໃນພຣະກິດ
ຕິຄຸນຂອງພຣະອົງຢ່າງເຕັມປ່ຽມ, ຊຶ່ງຈະ
[ຂ]ອອກໄປຫາພວກເຂົາຈາກຄົນຕ່າງຊາດ;
ເພາະຜູ້ຄົນພວກນີ້ຈະແຕກ [ຄ]ກະຈັດກະ
ຈາຍໄປ, ແລະ ຈະ [ງ]ກາຍເປັນຄົນຜິວດຳ,

9 ກ 4 ນຟ 1:49.
ຂ 3 ນຟ 16:8.
ຄ ມມ 1:1.
12 ກ ອນ 1:16;
ຣລມ 15:11–13.
ຄມພ ພຣະຄຳພີມໍມອນ.
ຂ ຄພ 3:16–20.
ຄ ມມ 8:4, 13–14;
ມຣນ 10:1–2.
14 ກ 2 ນຟ 29:13; 30:7–8.
ຄມພ ຊາວຢິວ.
ຂ 2 ນຟ 25:16–17.
ຄ 3 ນຟ 29:1–3.
15 ກ 3 ນຟ 21:3–7, 24–26.
ຂ 1 ນຟ 13:20–29, 38;
ມມ 7:8–9.
ຄ 1 ນຟ 10:12–14;
3 ນຟ 16:8.
ງ 2 ນຟ 26:33.

ສຶກກະປົກ, ແລະ ໜ້າກຽດຊັງ, ເກີນກວ່າຜູ້
ທີ່ເຄີຍເປັນມາແລ້ວໃນບັນດາຊາວເລມັນ,
ແລະ ນີ້ເປັນຍ້ອນຄວາມບໍ່ເຊື່ອຖື ແລະ
ການນັບຖືຮູບບູຊາຂອງພວກເຂົາ.
16 ເພາະຈົ່ງ ເບິ່ງ, ພຣະວິນຍານຂອງ
ພຣະຜູ້ເປັນເຈົ້າໄດ້ລົ້ມເລີກ [ກ]ຄວາມພະຍາ
ຍາມກັບບັນພະບຸລຸດຂອງພວກເຂົາແລ້ວ;
ແລະ ພວກເຂົາປາດສະຈາກພຣະຄຣິດ
ແລະ ພຣະເຈົ້າຢູ່ໃນໂລກນີ້; ແລະ ພວກ
ເຂົາຖືກຂັບໄລ່ໄປມາຄືກັນກັບ [ຂ]ຂີ້ແກບທີ່ຢູ່
ຕໍ່ໜ້າລົມ.
17 ຄັ້ງໜຶ່ງພວກເຂົາເຄີຍເປັນຄົນທີ່ໜ້າ
ຊົມ, ແລະ ພວກເຂົາມີພຣະຄຣິດເປັນ [ກ]ຜູ້
ລ້ຽງຂອງພວກເຂົາ; ແທ້ຈິງແລ້ວ, ພຣະເຈົ້າ
ອົງເປັນພຣະບິດາເປັນຜູ້ນຳພາພວກເຂົາ.
18 ແຕ່ບັດນີ້, ຈົ່ງ ເບິ່ງ, ພວກເຂົາຖືກ
ຊາຕານ [ກ]ພາໄປຄືກັນກັບຂີ້ແກບພັດຢູ່ຕໍ່
ໜ້າລົມ, ຫລື ວ່າຄືກັນກັບພາຊະນະທີ່ຖືກ
ຄື້ນທະເລຟາດໄປມາໂດຍປາດສະຈາກ
ໃບເຮືອ ຫລື ສະໝໍ, ຫລື ປາດສະຈາກສິ່ງ
ທີ່ຈະນຳມັນໄປ; ແລະ ຄືກັນກັບເຮືອເປັນຢູ່
ສັນໃດ, ພວກເຂົາກໍເປັນຢູ່ສັນນັ້ນ.
19 ແລະ ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້
ເກັບພອນຂອງພວກເຂົາໄວ້, ຊຶ່ງພວກເຂົາ
ຄວນຈະໄດ້ຮັບໃນແຜ່ນດິນ ເພື່ອ [ກ]ຄົນຕ່າງ
ຊາດຜູ້ຈະມາເປັນເຈົ້າຂອງແຜ່ນດິນ.
20 ແຕ່ຈົ່ງເບິ່ງ, ເຫດການຈະບັງເກີດຂຶ້ນ
ຄື ພວກເຂົາຈະຖືກຄົນຕ່າງຊາດຂັບໄລ່
ແລະ ແຕກກະຈັດກະຈາຍໄປ; ແລະ ຫລັງ
ຈາກທີ່ພວກເຂົາຖືກຄົນຕ່າງຊາດຂັບໄລ່
ແລະ ແຕກກະຈັດກະຈາຍໄປແລ້ວ, ຈົ່ງ
ເບິ່ງ, ເວລານັ້ນ ພຣະຜູ້ເປັນເຈົ້າຈະ [ກ]ນຶກ
ເຖິງ [ຂ]ພັນທະສັນຍາ ຊຶ່ງພຣະອົງໄດ້ເຮັດໄວ້
ກັບອັບຣາຮາມ, ແລະ ກັບເຊື້ອສາຍອິດສະ
ຣາເອນທັງໝົດ.
21 ແລະ ພຣະຜູ້ເປັນເຈົ້ານຶກເຖິງ [ກ]ຄຳ
ອະທິຖານຂອງຄົນທີ່ຊອບທຳນຳອີກ; ຊຶ່ງ
ພວກເຂົາໄດ້ວິງວອນທູນຂໍພຣະອົງເພື່ອ
ພວກເຂົາ.
22 ແລະ ເວລານັ້ນ, ໂອ້ ຄົນຕ່າງຊາດ,
ທ່ານຈະຢືນຢູ່ຕໍ່ໜ້າອຳນາດຂອງພຣະເຈົ້າ
ໄດ້ແນວໃດ, ຖ້າຫາກທ່ານບໍ່ກັບໃຈ ແລະ
ຫັນຈາກທາງຊົ່ວຂອງທ່ານ?
23 ທ່ານຮູ້ບໍວ່າ ທ່ານຢູ່ໃນພຣະຫັດຂອງ
ພຣະເຈົ້າ? ທ່ານຮູ້ບໍວ່າພຣະອົງມີອຳນາດ
ທັງໝົດ, ແລະ ໂດຍ [ກ]ຄຳບັນຊາອັນຍິ່ງ
ໃຫຍ່ຂອງພຣະອົງ ແຜ່ນດິນໂລກຈະ [ຂ]ກໍ້
ເຂົ້າກັນດັ່ງມ້ວນກະດາດ?
24 ສະນັ້ນ, ທ່ານຈົ່ງກັບໃຈເຖີດ, ແລະ ຈົ່ງ
ຖ່ອມຕົວລົງຕໍ່ພຣະພັກຂອງພຣະອົງ, ຖ້າ
ບໍ່ດັ່ງນັ້ນ ພຣະອົງຈະສະເດັດມາໃນຄວາມ
ຍຸດຕິທຳເພື່ອຕັດສິນລົງໂທດທ່ານ—ຖ້າບໍ່
ດັ່ງນັ້ນ ສ່ວນໜຶ່ງທີ່ເຫລືອຢູ່ຂອງລູກຫລານ
ຂອງຢາໂຄບຈະເຂົ້າໄປໃນບັນດາພວກ
ທ່ານດັ່ງ [ກ]ສິງ, ແລະ ຈະຈີກທ່ານອອກເປັນ
ຕ່ອນໆ, ແລະ ຈະບໍ່ມີໃຜຈະປົດປ່ອຍໄດ້.

## ບົດທີ 6

*ຊາວ ນີໄຟ ໄດ້ ເຕົ້າ ໂຮມ ກັນ ທີ່ ແຜ່ນ ດິນ ຄູ ໂມ ຣາ ສຳ ລັບ ການ ສູ້ ຮົບ ຄັ້ງ ສຸດ ທ້າຍ—ມໍມອນ ເຊື່ອງ ແຜ່ນ ຈາລຶກ ສັກສິດ*

16 ກ ປຖກ 6:3;
ອທ 2:15.
ຂ ພສສ 1:4.
17 ກ ຄມພ ຜູ້ລ້ຽງທີ່ດີ.
18 ກ 2 ນຟ 28:21.
19 ກ 3 ນຟ 20:27–28.
20 ກ 3 ນຟ 16:8–12.
ຂ ຄມພ ພັນທະສັນຍາ
ຂອງອັບຣາຮາມ.
21 ກ ອນ 1:12–18;
ມມ 9:36–37.
23 ກ ຣລມ 12:8–17.
ຂ 3 ນຟ 26:3.
24 ກ ມກ 5:8;
3 ນຟ 20:15–16.

*ໄວ້ໃນເນີນພູຄູໂມຣາ—ຊາວເລມັນໄດ້ຮັບໄຊຊະນະ, ແລະ ປະຊາຊາດນີໄຟຖືກທຳລາຍ ໄປ—ຫລາຍ ແສນຄົນ ຖືກ ຂ້າຕາຍດ້ວຍດາບ. ປະມານ ຄ.ສ. 385.*

1 ແລະ ບັດນີ້ຂ້າພະເຈົ້າໄດ້ເຮັດບັນທຶກກ່ຽວກັບ [ກ]ຄວາມພິນາດຂອງຊາວນີໄຟຜູ້ຄົນຂອງຂ້າພະເຈົ້າສຳເລັດແລ້ວ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ເດີນທັບໄປກ່ອນໜ້າຊາວເລມັນ.

2 ແລະ ຂ້າພະເຈົ້າມໍມອນໄດ້ຂຽນສານເຖິງກະສັດຂອງຊາວເລມັນ, ແລະ ໄດ້ຂໍຮ້ອງໃຫ້ເພິ່ນໃຫ້ໂອກາດແກ່ພວກເຮົາ ເພື່ອພວກເຮົາຈະໄດ້ມາເຕົ້າໂຮມຜູ້ຄົນຂອງພວກເຮົາໃຫ້ໄປຫາ [ກ]ແຜ່ນດິນຄູໂມຣາໃກ້ກັບເນີນພູມີຊື່ວ່າ ຄູໂມຣາ, ແລະ ບ່ອນນັ້ນພວກເຮົາຈະຕໍ່ສູ້ກັບພວກເຂົາໄດ້.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດຂອງຊາວເລມັນໄດ້ຍິນຍອມຕາມຄຳຂໍຮ້ອງຂອງຂ້າພະເຈົ້າ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ເດີນທັບໄປເຖິງແຜ່ນດິນຄູໂມຣາ, ແລະ ພວກເຮົາໄດ້ຕັ້ງຜ້າເຕັ້ນຢູ່ອ້ອມເນີນພູຄູໂມຣາ; ແລະ ມັນເປັນບ່ອນທີ່ມີຜືນນ້ຳອັນກວ້າງໃຫຍ່, ແລະ ມີແມ່ນ້ຳຫລາຍສາຍ ແລະ ມີຫ້ວຍນ້ຳຢູ່ຢ່າງຫລວງຫລາຍ; ແລະ ບ່ອນນີ້ພວກເຮົາມີຄວາມຫວັງທີ່ຈະໄດ້ປຽບຊາວເລມັນ.

5 ແລະ ເມື່ອ ສາມ ຮ້ອຍ ແປດ ສິບ ສີ່ ປີຜ່ານໄປ, ພວກເຮົາໄດ້ເຕົ້າໂຮມຜູ້ຄົນຂອງພວກເຮົາທີ່ເຫລືອຢູ່ທັງໝົດມາຫາແຜ່ນດິນຄູໂມຣາ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກເຮົາໄດ້ເຕົ້າໂຮມຜູ້ຄົນຂອງພວກເຮົາທັງໝົດເຂົ້າເປັນກຸ່ມດຽວກັນທີ່ແຜ່ນດິນຄູໂມຣາແລ້ວ, ຈົ່ງເບິ່ງຂ້າພະເຈົ້າມໍມອນເລີ່ມເຖົ້າແກ່ລົງ; ແລະ ໂດຍທີ່ຮູ້ຈັກວ່າ ມັນຈະເປັນການຕໍ່ສູ້ຄັ້ງສຸດທ້າຍຂອງຜູ້ຄົນຂອງຂ້າພະເຈົ້າ, ແລະ ໂດຍທີ່ໄດ້ຮັບບັນຊາຈາກພຣະຜູ້ເປັນເຈົ້າວ່າ ຂ້າພະເຈົ້າບໍ່ຄວນປ່ອຍໃຫ້ບັນທຶກສັກສິດ ຊຶ່ງບັນພະບຸລຸດຂອງພວກເຮົາມອບໃຫ້ຕໍ່ໆກັນມາຕົກຢູ່ໃນກຳມືຂອງຊາວເລມັນ, (ເພາະວ່າຊາວເລມັນຈະທຳລາຍມັນ) ສະນັ້ນ ຂ້າພະເຈົ້າຈຶ່ງເຮັດ [ກ]ບັນທຶກນີ້ຈາກແຜ່ນຈາລຶກຂອງນີໄຟ, ແລະ [ຂ]ເຊື່ອງບັນທຶກທັງໝົດ ຊຶ່ງຂ້າພະເຈົ້າໄດ້ຮັບມອບໝາຍມາໂດຍພຣະຫັດຂອງພຣະຜູ້ເປັນເຈົ້າໄວ້ໃນເນີນພູຄູໂມຣາ, ຍົກເວັ້ນແຕ່ແຜ່ນຈາລຶກສ່ວນໜ້ອຍໜຶ່ງ [ຄ]ເຫລົ່ານີ້ ຊຶ່ງຂ້າພະເຈົ້າໄດ້ມອບມັນໃຫ້ແກ່ [ງ]ໂມໂຣໄນລູກຊາຍຂອງຂ້າພະເຈົ້າ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງຂ້າພະເຈົ້າ, ພ້ອມດ້ວຍເມຍຂອງພວກເຂົາ ແລະ ລູກຂອງພວກເຂົາ, ໄດ້ຫລຽວເຫັນ [ກ]ກອງທັບຂອງຊາວເລມັນກຳລັງມຸ້ງໜ້າມາຫາພວກເຂົາ; ແລະ ດ້ວຍຄວາມຢ້ານກົວຕໍ່ຄວາມຕາຍອັນເປັນຕາຢ້ານ ຊຶ່ງມີຢູ່ເຕັມອົກຂອງຄົນຊົ່ວທຸກຄົນ, ພວກເຂົາໄດ້ຄອຍຕ້ອນຮັບພວກນັ້ນຢູ່.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຍົກທັບມາສູ້ຮົບກັບພວກເຮົາ, ແລະ ທຸກຄົນກໍເຕັມໄປດ້ວຍຄວາມຢ້ານກົວທີ່ສຸດເພາະຄວາມຫລວງຫລາຍຂອງຈຳນວນຄົນຂອງພວກເຂົາ.

**6** 1*ກ* 1 ນຟ 12:19; ຈຮ 1:10; ແອວ 45:9–14; ຮລມ 13:5–11.
2*ກ* ອທ 9:3.
6*ກ* ຄມພ ແຜ່ນຈາລຶກ.
*ຂ* ອທ 15:11.
*ຄ* ຄມ 1:2.
*ງ* ມມ 8:1.
7*ກ* 1 ນຟ 12:15.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ເຂົ້າມາໂຈມຕີຜູ້ຄົນຂອງຂ້າພະເຈົ້າ
ດ້ວຍດາບ, ແລະ ດ້ວຍທະນູ, ແລະ ດ້ວຍ
ລູກທະນູ, ແລະ ດ້ວຍຂວານ, ແລະ ດ້ວຍ
ອາວຸດແຫ່ງສົງຄາມທຸກຊະນິດ.

10 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ຂອງຂ້າພະເຈົ້າ ໄດ້ຖືກ ໂຄ່ນລົງ, ແທ້ຈິງ
ແລ້ວ, ແມ່ນແຕ່ຫລາຍ ໝື່ນ ຄົນ ຂອງຂ້າ
ພະເຈົ້າຊຶ່ງຢູ່ກັບຂ້າພະເຈົ້າ, ແລະ ຂ້າພະ
ເຈົ້າໄດ້ຮັບບາດເຈັບຢູ່ທ່າມກາງພວກເຂົາ;
ແລະ ພວກເຂົາໄດ້ຜ່ານຂ້າພະເຈົ້າໄປ ຄື
ພວກເຂົາບໍ່ໄດ້ເຮັດໃຫ້ຊີວິດຂອງຂ້າພະ
ເຈົ້າສິ້ນສຸດລົງ.

11 ແລະ ເມື່ອພວກເຂົາໄດ້ຜ່ານໄປ ແລະ
ໄດ້ໂຄ່ນຜູ້ຄົນຂອງຂ້າພະເຈົ້າລົງ [ກ]ຈົນໝົດ
ແລ້ວ ນອກຈາກພວກເຮົາຊາວສີ່ຄົນເທົ່າ
ນັ້ນ (ຊຶ່ງໃນບັນດາຄົນເຫລົ່ານີ້ມີໂມໂຣໄນ
ລູກຊາຍຂອງຂ້າພະເຈົ້າ) ແລະ ໂດຍການ
ລອດຊີວິດຈາກພວກທີ່ຕາຍຂອງຜູ້ຄົນ
ຂອງພວກເຮົາ, ໃນມື້ຕໍ່ມາ, ຫລັງຈາກຊາວ
ເລມັນກັບໄປຄ້າຍຂອງພວກເຂົາ, ຈາກ
ຈອມເນີນພູຄູໂມຣາ, ພວກເຮົາໄດ້ເຫັນຜູ້
ຄົນຂອງຂ້າພະເຈົ້າໜຶ່ງໝື່ນຄົນທີ່ຂ້າພະ
ເຈົ້ານຳໜ້າໄປຖືກໂຄ່ນລົງຈົນໝົດ.

12 ແລະ ພວກເຮົາກໍໄດ້ເຫັນສິບຂອງສິບ
ພັນຄົນຊຶ່ງໂມໂຣໄນລູກຊາຍຂອງຂ້າພະ
ເຈົ້ານຳພາໄປອີກ.

13 ແລະ ຈົ່ງເບິ່ງ, ໜຶ່ງໝື່ນຄົນຂອງກິດ
ກິດໂດນາກໍລົ້ມຕາຍຢູ່, ແລະ ລາວກໍຢູ່ໃນ
ທ່າມກາງພວກເຂົານັ້ນ.

14 ແລະ ເລມາກໍໄດ້ລົ້ມຕາຍຢູ່ກັບໜຶ່ງ
ໝື່ນຄົນຂອງລາວ; ແລະ ກິນການກໍໄດ້
ລົ້ມຕາຍຢູ່ກັບໜຶ່ງໝື່ນຄົນຂອງລາວ; ແລະ
ລິມຮາກໍໄດ້ລົ້ມຕາຍຢູ່ກັບໜຶ່ງໝື່ນຄົນຂອງ
ລາວ; ແລະ ເຈນີອຳກໍໄດ້ລົ້ມຕາຍຢູ່ກັບໜຶ່ງ
ໝື່ນຄົນຂອງລາວ; ພ້ອມທັງຄູມະໄນຮາ,
ແລະ ໂມໂຣໄນຮາ, ແລະ ອານທິໂອນຳ,
ແລະ ຊິບລຳ, ແລະ ເຊມ, ແລະ ຈອດ, ຕ່າງ
ກໍໄດ້ລົ້ມຕາຍຢູ່ກັບໜຶ່ງໝື່ນຄົນຂອງຕົນ.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
ຫົວໜ້າທະຫານຄົນອື່ນອີກສິບຄົນທີ່ໄດ້
ລົ້ມຕາຍດ້ວຍອາວຸດແຫ່ງສົງຄາມຢູ່ກັບໜຶ່ງ
ໝື່ນຄົນຂອງຕົນ; ແທ້ຈິງແລ້ວ, ຜູ້ຄົນຂອງ
ຂ້າພະເຈົ້າ [ກ]ທັງໝົດໄດ້ຖືກຂ້າຕາຍຈົນ
ໝົດ, ຍົກເວັ້ນແຕ່ຊາວສີ່ຄົນທີ່ຢູ່ກັບຂ້າພະ
ເຈົ້ານີ້, ແລະ ບໍ່ເທົ່າໃດຄົນທີ່ໜີໄປຫາແຜ່ນ
ດິນທາງໃຕ້, ແລະ ບໍ່ເທົ່າໃດຄົນທີ່ແຕກໄປ
ຫາຊາວເລມັນ; ແລະ ເນື້ອໜັງ, ແລະ ກະ
ດູກ, ແລະ ເລືອດຂອງພວກເຂົາເຕັມຊະ
ຊາຍຢູ່ຕາມພື້ນແຜ່ນດິນ, ຖືກຖິ້ມໃຫ້ເປື່ອຍ
ເນົ່າຢູ່ໃນແຜ່ນດິນດ້ວຍນ້ຳມືຂອງຄົນທີ່ຂ້າ
ພວກເຂົາ, ແລະ ຖືກປ່ອຍໃຫ້ສະຫລາຍ
ໄປ ແລະ ກັບໄປຫາແຜ່ນດິນແມ່ຂອງພວກ
ເຂົາ.

16 ແລະ ຈິດວິນຍານຂອງຂ້າພະເຈົ້າ
ເປັນທຸກ, ດ້ວຍຄວາມເຈັບປວດຍ້ອນການ
ຕາຍຂອງຜູ້ຄົນຂອງຂ້າພະເຈົ້າ, ແລະ ຂ້າ
ພະເຈົ້າໄດ້ຮ້ອງອອກມາວ່າ:

17 ໂອ້ ທ່ານຜູ້ສວຍງາມ, ທ່ານອອກໄປ
ຈາກທາງຂອງພຣະຜູ້ເປັນເຈົ້າໄດ້ແນວໃດ!
ໂອ້ ທ່ານຜູ້ສວຍງາມ, ທ່ານບໍ່ຍອມຮັບພຣະ
ເຢຊູອົງນັ້ນໄດ້ແນວໃດ, ຜູ້ຢືນວາພຣະ
ພາຫາຕ້ອນຮັບທ່ານຢູ່!

18 ຈົ່ງເບິ່ງ, ຖ້າຫາກທ່ານບໍ່ໄດ້ເຮັດເຊັ່ນ
ນີ້, ທ່ານກໍຈະບໍ່ລົ້ມຕາຍ. ແຕ່ຈົ່ງເບິ່ງ, ທ່ານ
ໄດ້ລົ້ມຕາຍໄປ, ແລະ ຂ້າພະເຈົ້າໂສກເສົ້າ
ເພາະການສູນເສຍທ່ານ.

19 ໂອ້ ທ່ານຜູ້ເປັນລູກຊາຍ ແລະ ລູກ

11 ກ 1 ນຟ 12:19–20; ຣລມ 15:17.

15 ກ ແອວ 9:24.

ສາວທີ່ສວຍງາມ, ທ່ານຜູ້ເປັນພໍ່ ແລະ ແມ່,
ທ່ານຜູ້ເປັນສາມີ ແລະ ພັນລະຍາ, ທ່ານຜູ້
ສວຍງາມ, ເປັນໄປໄດ້ແນວໃດທີ່ທ່ານມາ
ລົ້ມຕາຍໄປແບບນີ້!
20 ແຕ່ຈົ່ງເບິ່ງ, ທ່ານໄດ້ຈາກໄປແລ້ວ,
ແລະ ຄວາມເສົ້າສະຫລົດໃຈຂອງຂ້າພະ
ເຈົ້າບໍ່ສາມາດນຳທ່ານກັບຄືນມາໄດ້.
21 ແລະ ມື້ນັ້ນຈະມາຮອດໃນບໍ່ຊ້ານີ້ ຊຶ່ງ
ຮ່າງກາຍທີ່ເປັນມະຕະຂອງທ່ານຈະຕ້ອງ
ສວມໃສ່ຄວາມເປັນອະມະຕະ ແລະ ຮ່າງ
ກາຍຊຶ່ງກຳລັງເນົ່າເປື່ອຍຢູ່ນີ້ຈະກັບເປັນ
ຮ່າງກາຍທີ່ [ກ]ເນົ່າເປື່ອຍບໍ່ໄດ້ໃນບໍ່ຊ້າ;
ແລະ ເມື່ອນັ້ນທ່ານຈະຕ້ອງຢືນຢູ່ຕໍ່ໜ້າບັນ
ລັງພິພາກສາຂອງພຣະຄຣິດ, ເພື່ອຮັບການ
ພິພາກສາຕາມວຽກງານຂອງທ່ານ; ແລະ
ຖ້າຫາກເປັນໄປວ່າທ່ານເປັນຄົນຊອບທຳ,
ເມື່ອນັ້ນທ່ານຈະໄດ້ຮັບພອນດັ່ງບັນພະບຸ
ລຸດຂອງທ່ານຜູ້ຈາກໄປກ່ອນທ່ານ.
22 ໂອ້ ຖ້າທ່ານໄດ້ກັບໃຈກ່ອນຄວາມ
ພິນາດອັນໃຫຍ່ຫລວງນີ້ໄດ້ມາເຖິງທ່ານ.
ແຕ່ຈົ່ງເບິ່ງ, ທ່ານໄດ້ຈາກໄປແລ້ວ, ແລະ
ພຣະບິດາ, ແທ້ຈິງແລ້ວ, ພຣະບິດາຜູ້ສະ
ຖິດນິລັນດອນແຫ່ງສະຫວັນຮູ້ເຖິງສະພາບ
ຂອງທ່ານ; ແລະ ພຣະອົງກະທຳກັບທ່ານ
ຕາມ [ກ]ຄວາມຍຸດຕິທຳ ແລະ ຕາມ [ຂ]ຄວາມ
ເມດຕາຂອງພຣະອົງ.

## ບົດທີ 7

*ມໍມອນເຊື້ອເຊີນຊາວເລມັນໃນຍຸກສຸດທ້າຍໃຫ້ເຊື່ອໃນພຣະຄຣິດ, ໃຫ້ຮັບເອົາພຣະກິດຕິຄຸນຂອງພຣະອົງ, ແລະ ຮັບຄວາມລອດ—ທຸກຄົນທີ່ເຊື່ອໃນພຣະຄຣິສຕະທຳຄຳພີຈະເຊື່ອໃນພຣະຄຳພີມໍມອນ. ປະມານ ຄ.ສ. 385.*

1 ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າຈະເວົ້າ
ກັບ [ກ]ຜູ້ທີ່ເຫລືອຢູ່ຂອງຜູ້ຄົນພວກນີ້ ຜູ້ທີ່ໄດ້
ຮັບການຍົກເວັ້ນ, ຖ້າຫາກເປັນໄປວ່າ ພຣະ
ຜູ້ເປັນເຈົ້າຈະປະທານສິ່ງທີ່ຂ້າພະເຈົ້າຈະ
ເວົ້າໄປນີ້ໃຫ້ແກ່ພວກເຂົາ, ເພື່ອພວກເຂົາ
ຈະໄດ້ຮູ້ຈັກເຖິງເລື່ອງຕ່າງໆຂອງບັນພະ
ບຸລຸດຂອງພວກເຂົາ; ແທ້ຈິງແລ້ວ, ຂ້າພະ
ເຈົ້າເວົ້າກັບທ່ານວ່າ, ທ່ານຜູ້ເປັນເຊື້ອສາຍ
ອິດສະຣາເອນທີ່ເຫລືອຢູ່; ແລະ ນີ້ຄືຄຳທີ່
ຂ້າພະເຈົ້າກ່າວ:
2 ຈົ່ງຮູ້ໄວ້ວ່າ ທ່ານເປັນ [ກ]ເຊື້ອສາຍ
ອິດສະຣາເອນ.
3 ຈົ່ງຮູ້ໄວ້ວ່າ ທ່ານຕ້ອງກັບໃຈ ຖ້າບໍ່ດັ່ງ
ນັ້ນ, ທ່ານຈະລອດບໍ່ໄດ້.
4 ຈົ່ງຮູ້ໄວ້ວ່າ ທ່ານຕ້ອງປະຖິ້ມອາວຸດ
ແຫ່ງສົງຄາມຂອງທ່ານເສຍ, ແລະ ບໍ່ໃຫ້
ເບີກບານໃນການຫລັ່ງເລືອດອີກຕໍ່ໄປ,
ແລະ ບໍ່ຕ້ອງຈັບມັນຂຶ້ນມາອີກ ເວັ້ນເສຍ
ແຕ່ເວລາທີ່ພຣະເຈົ້າບັນຊາທ່ານເທົ່ານັ້ນ.
5 ຈົ່ງຮູ້ໄວ້ວ່າ ທ່ານຕ້ອງມາຫາ [ກ]ຄວາມຮູ້
ເລື່ອງກ່ຽວກັບບັນພະບຸລຸດຂອງທ່ານ, ແລະ
ກັບໃຈຈາກບາບ ແລະ ຄວາມຊົ່ວຮ້າຍທັງ
ໝົດຂອງທ່ານ, ແລະ [ຂ]ເຊື່ອໃນພຣະເຢຊູ
ຄຣິດ, ວ່າພຣະອົງເປັນພຣະບຸດຂອງພຣະ
ເຈົ້າ, ແລະ ວ່າພຣະອົງໄດ້ຖືກຊາວຢິວຂ້າ,
ແລະ ໂດຍອຳນາດຂອງພຣະບິດາ ພຣະ
ອົງໄດ້ເປັນຄືນມາມີຊີວິດອີກ, ຊຶ່ງໂດຍການ
ນັ້ນ ພຣະອົງໄດ້ [ຄ]ໄຊຊະນະເໜືອຫລຸມສົບ;

21 *ກ* 1 ກຣທ 15:53–54.
22 *ກ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
7 1 *ກ* ຣລມ 15:11–13.
2 *ກ* ແອວ 10:3.
5 *ກ* 2 ນຟ 3:12.
*ຂ* ຄມພ ສັດທາ; ເຊື່ອ, ຄວາມເຊື່ອ.
*ຄ* ອຊຢ 25:8; ມຊຢ 16:7–8.

ແລະ ໃນ ພຣະ ອົງ ຄວາມ ເຈັບ ປວດ ແຫ່ງ
ຄວາມຕາຍໄດ້ຖືກກືນໄວ້ນຳອີກ.
6 ແລະ ພຣະ ອົງ ເຮັດໃຫ້ເກີດມີ [ກ]ການ
ຟື້ນຄືນຊີວິດຂອງຄົນຕາຍ, ຊຶ່ງໂດຍການ
ນັ້ນມະນຸດຈະຕ້ອງຖືກຍົກຂຶ້ນມາຢືນຢູ່ຕໍ່
ໜ້າ [ຂ]ບັນລັງພິພາກສາຂອງພຣະອົງ.
7 ແລະ ພຣະອົງໄດ້ນຳ [ກ]ການໄຖ່ມາສູ່
ໂລກ, ຊຶ່ງໂດຍການນັ້ນຜູ້ທີ່ຖືກພົບວ່າ [ຂ]ບໍ່
ມີຄວາມຜິດຕໍ່ພຣະພັກຂອງພຣະອົງໃນ
ວັນພິພາກສາ ຍ່ອມໄດ້ຮັບອະນຸຍາດໃຫ້
ເຂົ້າ [ຄ]ໄປຢູ່ໃນທີ່ປະທັບຂອງພຣະເຈົ້າໃນ
ອານາຈັກຂອງພຣະອົງ, ເພື່ອຮ້ອງເພງ
ສັນລະເສີນໂດຍບໍ່ຢຸດຢັ້ງຮ່ວມກັບ [ງ]ຜູ້ຂັບ
ຮ້ອງຢູ່ເບື້ອງເທິງ, ເພື່ອສັນລະເສີນພຣະ
ບິດາ, ແລະ ພຣະບຸດ, ແລະ ພຣະວິນຍານ
ບໍລິສຸດ, ຊຶ່ງເປັນ [ຈ]ພຣະເຈົ້າດຽວກັນ, ໃນ
ສະພາວະແຫ່ງ [ສ]ຄວາມສຸກອັນບໍ່ມີທີ່ສຸດ.
8 ສະນັ້ນ ຈົ່ງກັບໃຈ, ແລະ ຮັບບັບຕິ
ສະມາໃນພຣະນາມຂອງພຣະເຢຊູ, ແລະ
ຍຶດໝັ້ນໃນ [ກ]ພຣະກິດຕິຄຸນຂອງພຣະ
ຄຣິດ, ຊຶ່ງຈະຖືກວາງຢູ່ຕໍ່ໜ້າທ່ານ, ບໍ່ພຽງ
ແຕ່ມີຢູ່ໃນ [ຂ]ບັນທຶກນີ້ເທົ່ານັ້ນ ແຕ່ມີຢູ່ໃນ
ບັນທຶກຊຶ່ງຈະມາຫາຄົນຕ່າງຊາດ [ຄ]ຈາກ
ຊາວຢິວນຳອີກ, ຊຶ່ງບັນທຶກນັ້ນຈະອອກ
ຈາກຄົນຕ່າງຊາດ [ງ]ມາຫາທ່ານ.
9 ເພາະຈົ່ງເບິ່ງ, [ກ]ເລື່ອງນີ້ມີຂຽນໄວ້ໂດຍ
ມີເຈດຕະນາທີ່ຈະໃຫ້ທ່ານ [ຂ]ເຊື່ອເລື່ອງ
ນັ້ນ; ແລະ ຖ້າຫາກທ່ານເຊື່ອເລື່ອງນັ້ນ;
ທ່ານຈະເຊື່ອເລື່ອງນີ້ຄືກັນ; ແລະ ຖ້າຫາກ
ທ່ານເຊື່ອເລື່ອງນີ້ ທ່ານຈະຮູ້ກ່ຽວກັບບັນ
ພະບຸລຸດຂອງທ່ານ, ແລະ ຈະຮູ້ກ່ຽວກັບ
ວຽກງານອັນໜ້າອັດສະຈັນໃຈນຳອີກ ຊຶ່ງ
ກະທຳຂຶ້ນໂດຍອຳນາດຂອງພຣະເຈົ້າໃນ
ບັນດາພວກເຂົາ.
10 ແລະ ທ່ານຈະຮູ້ອີກວ່າ ທ່ານເປັນ
ສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອສາຍຂອງ
ຢາໂຄບ; ສະນັ້ນ ທ່ານຈຶ່ງຖືກນັບເຂົ້າຢູ່ໃນ
ບັນດາຜູ້ຄົນແຫ່ງພັນທະສັນຍາທຳອິດ;
ແລະ ຖ້າຫາກເປັນໄປວ່າ ທ່ານເຊື່ອໃນ
ພຣະຄຣິດ, ແລະ ຮັບບັບຕິສະມາດ້ວຍນ້ຳ
ກ່ອນ, ແລ້ວດ້ວຍໄຟ ແລະ ດ້ວຍພຣະວິນ
ຍານບໍລິສຸດ, ຕາມ [ກ]ຕົວຢ່າງຂອງພຣະຜູ້
ຊ່ວຍໃຫ້ລອດຂອງພວກເຮົາ, ຕາມສິ່ງທີ່
ພຣະອົງບັນຊາພວກເຮົາ, ມັນຈະດີກັບທ່ານ
ໃນວັນແຫ່ງການພິພາກສານັ້ນ. ອາແມນ.

## ບົດທີ 8

*ຊາວເລມັນຊອກທຳລາຍຊາວນີໄຟ—ພຣະຄຳພີມໍມອນຈະອອກມາໂດຍອຳນາດຂອງພຣະເຈົ້າ—ຄຳສາບແຊ່ງເຖິງຜູ້ທີ່ມີຈິດໃຈໂຫດຮ້າຍປ່າເຖື່ອນ ແລະ ຕໍ່ຕ້ານວຽກງານຂອງພຣະຜູ້ເປັນເຈົ້າ—ບັນທຶກຂອງນີໄຟຈະອອກມາໃນເວລາທີ່ຊົ່ວຮ້າຍ, ເສື່ອມໂຊມ, ແລະ ມີການປະຖິ້ມຄວາມເຊື່ອ. ປະມານ ຄ.ສ. 400–421.*

1 ຈົ່ງ ເບິ່ງຂ້າພະເຈົ້າ [ກ]ໂມໂຣໄນເຮັດ

6 *ກ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຂ* ຄມພ ພຣະເຢຊູຄຣິດ—ພິພາກສາ; ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
7 *ກ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຂ* ຄມພ ຮັບຮອງ, ການຮັບຮອງ.
*ຄ* 1 ນຟ 10:21; ຄພ 76:62; ມຊ 6:57.
*ງ* ມຊຢ 2:28.
*ຈ* ຄພ 20:28. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ສ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
8 *ກ* ຄມພ ພຣະກິດຕິຄຸນ.
*ຂ* ຄມພ ພຣະຄຣິສຕະທຳຄຳພີ.
*ຄ* 2 ນຟ 29:4–13.
*ງ* 1 ນຟ 13:38.
9 *ກ* ຄມພ ພຣະຄຳພີມໍມອນ.
*ຂ* 1 ນຟ 13:38–41.
10 *ກ* 2 ນຟ 31:5–9.
**8** 1 *ກ* ຄມພ ໂມໂຣໄນ, ລູກຊາຍຂອງມໍມອນ.

[ຂ]ບັນທຶກຂອງມໍມອນບິດາຂອງຂ້າພະເຈົ້າ
ຈົບແລ້ວ. ຈົ່ງເບິ່ງ, ຂ້າພະເຈົ້າມີພຽງບໍ່ເທົ່າ
ໃດເລື່ອງທີ່ຈະຂຽນ, ຊຶ່ງເປັນເລື່ອງທີ່ບິດາ
ຂອງຂ້າພະເຈົ້າສັ່ງໃຫ້ຂ້າພະເຈົ້າຂຽນໄວ້.
2 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື
ຫລັງຈາກການສູ້ຮົບ [ກ]ຄັ້ງໃຫຍ່ ແລະ ໜ້າ
ສະຫຍົດສະຫຍອງທີ່ຄູໂມຣານັ້ນ, ຈົ່ງເບິ່ງ,
ຊາວນີໄຟຜູ້ທີ່ໜີໄປຫາແຜ່ນດິນທາງໃຕ້
ໄດ້ຖືກ [ຂ]ຊາວເລມັນຕິດຕາມລ່າຈົນຖືກທຳ
ລາຍໄປໝົດ.
3 ແລະ ບິດາຂອງຂ້າພະເຈົ້າກໍຖືກພວກ
ເຂົາຂ້ານຳອີກ, ແລະ ຂ້າພະເຈົ້າຖືກປ່ອຍ
ໃຫ້ຢູ່ [ກ]ຜູ້ດຽວເພື່ອຂຽນເລື່ອງເສົ້າສະຫລົດ
ໃຈກ່ຽວກັບຄວາມພິນາດຂອງຜູ້ຄົນຂອງ
ຂ້າພະເຈົ້າ. ແຕ່ຈົ່ງເບິ່ງ, ພວກເຂົາໄດ້ຈາກ
ໄປແລ້ວ, ແລະ ຂ້າພະເຈົ້າກໍໄດ້ເຮັດໃຫ້
ຄຳສັ່ງຂອງບິດາຂ້າພະເຈົ້າສຳເລັດແລ້ວ.
ແລະ ພວກເຂົາຈະຂ້າຂ້າພະເຈົ້າຫລືບໍ່, ຂ້າ
ພະເຈົ້າກໍບໍ່ຮູ້.
4 ສະນັ້ນ ຂ້າພະເຈົ້າຈະຂຽນບັນທຶກ
ແລະ ຈະເຊື່ອງມັນໄວ້ໃນດິນ; ແລະ ບ່ອນ
ໃດທີ່ຂ້າພະເຈົ້າຈະໄປນັ້ນບໍ່ສຳຄັນແລ້ວ.
5 ຈົ່ງເບິ່ງ, ບິດາຂອງຂ້າພະເຈົ້າໄດ້ເຮັດ
[ກ]ບັນທຶກນີ້, ແລະ ເພິ່ນໄດ້ຂຽນຈຸດປະສົງ
ຂອງມັນໄວ້. ແລະ ຈົ່ງເບິ່ງ, ຂ້າພະເຈົ້າຈະ
ຂຽນມັນໄວ້ອີກຖ້າຫາກຂ້າພະເຈົ້າມີບ່ອນ
ຂຽນໃນ [ຂ]ແຜ່ນຈາລຶກ, ແຕ່ຂ້າພະເຈົ້າບໍ່ມີ,
ແລະ ຂ້າພະເຈົ້າກໍບໍ່ມີໂລຫະອີກ, ເພາະຂ້າ
ພະເຈົ້າຢູ່ຄົນດຽວ. ບິດາຂອງຂ້າພະເຈົ້າໄດ້
ຖືກຂ້າຢູ່ໃນການສູ້ຮົບພ້ອມທັງຍາດພີ່ນ້ອງ
ຂອງຂ້າພະເຈົ້າທັງໝົດ, ແລະ ຂ້າພະເຈົ້າ
ບໍ່ມີໝູ່ເພື່ອນເລີຍທັງບໍ່ມີບ່ອນຈະໄປຫາ;
ແລະ ຂ້າພະເຈົ້າບໍ່ຮູ້ວ່າ ພຣະຜູ້ເປັນເຈົ້າຈະ
ຍອມໃຫ້ຂ້າພະເຈົ້າມີຊີວິດຢູ່ດົນປານໃດ.
6 ຈົ່ງເບິ່ງ, [ກ]ສີ່ຮ້ອຍປີໄດ້ຜ່ານໄປນັບຕັ້ງ
ແຕ່ການສະເດັດມາຂອງພຣະຜູ້ເປັນເຈົ້າ
ແລະ ພຣະຜູ້ຊ່ອຍໃຫ້ລອດ.
7 ແລະ ຈົ່ງເບິ່ງ, ຊາວເລມັນໄດ້ຕາມ
ລ່າຊາວນີໄຟຜູ້ຄົນຂອງຂ້າພະເຈົ້າ, ຈາກ
ເມືອງໜຶ່ງໄປຫາອີກເມືອງໜຶ່ງ ແລະ ຈາກ
ບ່ອນໜຶ່ງໄປຫາອີກບ່ອນໜຶ່ງ, ຈົນວ່າບໍ່
ເຫລືອຈັກຄົນ; ແລະ [ກ]ການຕົກຂອງພວກ
ເຂົານັ້ນໃຫຍ່ຫລວງ; ແທ້ຈິງແລ້ວ, ຄວາມ
ພິນາດຂອງຊາວນີໄຟຜູ້ຄົນຂອງຂ້າພະເຈົ້າ
ນັ້ນຍິ່ງໃຫຍ່ ແລະ ໜ້າອັດສະຈັນທີ່ສຸດ.
8 ແລະ ຈົ່ງເບິ່ງ, ມັນແມ່ນພຣະຫັດຂອງ
ພຣະຜູ້ເປັນເຈົ້າທີ່ທຳການນີ້. ແລະ ຈົ່ງເບິ່ງ
ອີກ, ຊາວເລມັນກຳລັງເຮັດ [ກ]ສົງຄາມຕໍ່ສູ້
ກັນເອງຢູ່; ແລະ ທັງທົ່ວພື້ນແຜ່ນດິນນີ້ເປັນ
ຮອບໜຶ່ງຂອງການຄາດຕະກຳ ແລະ ການ
ນອງເລືອດທີ່ຕໍ່ເນື່ອງກັນບໍ່ມີຍາມເຊົາ;
ແລະ ບໍ່ມີຜູ້ໃດຮູ້ວ່າ ສົງຄາມຈະສິ້ນສຸດລົງ
ຕອນໃດ.
9 ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າຈະບໍ່
ເວົ້າກ່ຽວກັບພວກເຂົາອີກຕໍ່ໄປ, ເພາະວ່າ
ບໍ່ມີຜູ້ໃດເລີຍທີ່ເຫລືອຢູ່ນອກຈາກຊາວ
ເລມັນ ແລະ [ກ]ພວກໂຈນເທົ່ານັ້ນທີ່ຍັງມີຊີ
ວິດຢູ່ໃນພື້ນແຜ່ນດິນ.
10 ແລະ ບໍ່ມີຜູ້ໃດຮູ້ຈັກພຣະເຈົ້າທີ່ທ່ຽງ
ແທ້ເລີຍ ນອກຈາກ [ກ]ສານຸສິດຂອງພຣະ
ເຢຊູ, ຜູ້ທີ່ຄົງຢູ່ໃນແຜ່ນດິນຈົນຮອດເວລາ
ທີ່ຄວາມຊົ່ວຮ້າຍຂອງຜູ້ຄົນໃຫຍ່ຫລວງ;

1 ຂ ຄມພ ແຜ່ນຈາລຶກ.
2 ກ ມມ 6:2–15.
ຂ ຄພ 3:18.
3 ກ ມຣນ 9:22.
5 ກ ມມ 2:17–18.
ຂ ມມ 6:6.
6 ກ ແອວ 45:10.
7 ກ 1 ນຟ 12:2–3.
8 ກ 1 ນຟ 12:20–23.
9 ກ ມມ 2:8.
10 ກ 3 ນຟ 28:7;
ອທ 12:17.
ຄມພ ສານຸສິດຊາວ
ນີໄຟສາມຄົນ.

ແລ້ວພຣະຜູ້ເປັນເຈົ້າຈະບໍ່ປ່ອຍໃຫ້ພວກ
ເພິ່ນ [ຂ]ຢູ່ກັບຜູ້ຄົນອີກ; ແລະ ພວກເພິ່ນຍັງ
ຢູ່ໃນແຜ່ນດິນຫລືບໍ່ນັ້ນ ບໍ່ມີຜູ້ໃດຮູ້.
11 ແຕ່ຈົ່ງເບິ່ງ, [ກ]ບິດາຂອງຂ້າພະເຈົ້າ
ແລະ ຂ້າພະເຈົ້າໄດ້ເຫັນພວກເພິ່ນ, ແລະ
ພວກເພິ່ນໄດ້ປະຕິບັດສາດສະໜາກິດແກ່
ພວກເຮົາ.
12 ແລະ ຜູ້ໃດທີ່ໄດ້ຮັບບັນທຶກນີ້ ແລະ
ບໍ່ຕຳນິຕິຕຽນມັນ ເພາະຂໍ້ບົກພ່ອງທີ່ຢູ່ໃນ
ນັ້ນ, ຜູ້ນັ້ນຈະຮູ້ຈັກເຖິງ [ກ]ເລື່ອງສຳຄັນກວ່າ
ນີ້. ຈົ່ງເບິ່ງ, ຂ້າພະເຈົ້າຄືໂມໂຣໄນ; ແລະ
ຖ້າຫາກເປັນໄປໄດ້, ຂ້າພະເຈົ້າຈະເຮັດໃຫ້
ທຸກສິ່ງທຸກຢ່າງເປັນທີ່ຮູ້ຈັກແກ່ທ່ານ.
13 ຈົ່ງເບິ່ງ, ຂ້າພະເຈົ້າຂໍຈົບການເວົ້າ
ກ່ຽວກັບຜູ້ຄົນພວກນີ້ໄວ້ເທົ່ານີ້. ຂ້າພະເຈົ້າ
ເປັນລູກຊາຍຂອງມໍມອນ, ແລະ ບິດາຂອງ
ຂ້າພະເຈົ້າເປັນ [ກ]ຜູ້ສືບຕະກຸນຂອງນີໄຟ.
14 ແລະ ຂ້າພະເຈົ້າຄືຜູ້ທີ່ [ກ]ເຊື່ອງບັນ
ທຶກໄວ້ກັບພຣະຜູ້ເປັນເຈົ້າ; ແຜ່ນຈາລຶກນີ້
ບໍ່ມີຄ່າຫຍັງ, ຕາມພຣະບັນຊາຂອງພຣະຜູ້
ເປັນເຈົ້າ, ເພາະວ່າພຣະອົງກ່າວຢ່າງແນ່
ນອນວ່າບໍ່ມີຜູ້ໃດຈະໄດ້ມັນໄປ [ຂ]ເພື່ອຫາ
ຜົນປະໂຫຍດສ່ວນຕົວ; ແຕ່ວ່າບັນທຶກທີ່ຢູ່
ໃນນັ້ນມີຄ່າທີ່ສຸດ ແລະ ຜູ້ໃດທີ່ຈະນຳມັນ
ໄປສູ່ຄວາມສະຫວ່າງ, ພຣະຜູ້ເປັນເຈົ້າຈະ
ປະທານພອນໃຫ້ແກ່ຜູ້ນັ້ນ.
15 ເພາະວ່າບໍ່ມີຜູ້ໃດທີ່ມີອຳນາດນຳມັນ
ໄປສູ່ຄວາມສະຫວ່າງໄດ້ນອກຈາກພຣະ
ເຈົ້າຈະປະທານໃຫ້ແກ່ຜູ້ນັ້ນເທົ່ານັ້ນ; ເພາະ
ພຣະເຈົ້າມີພຣະປະສົງວ່າ ມັນຈະເປັນໄປ
ເພາະການທີ່ [ກ]ເຫັນແກ່ລັດສະໝີພາບຂອງ
ພຣະອົງແຕ່ຢ່າງດຽວ, ຫລື ເພື່ອຄວາມຜາ
ສຸກຂອງຜູ້ຄົນແຫ່ງພັນທະສັນຍາຂອງພຣະ
ຜູ້ເປັນເຈົ້າໃນສະໄໝບູຮານ ແລະ ເພື່ອຜູ້ທີ່
ໄດ້ແຕກກະຈັດກະຈາຍໄປດົນນານແລ້ວ.
16 ແລະ [ກ]ຄົນທີ່ຈະນຳສິ່ງນີ້ມາຫາຄວາມ
ສະຫວ່າງຍ່ອມເປັນສຸກ; ເພາະວ່າມັນຈະ
ຖືກ [ຂ]ນຳອອກຈາກຄວາມມືດໄປຫາແສງສະ
ຫວ່າງຕາມພຣະຄຳຂອງພຣະເຈົ້າ; ແທ້ຈິງ
ແລ້ວ, ມັນຈະຖືກນຳອອກມາຈາກດິນ, ແລະ
ມັນຈະສ່ອງແສງສະຫວ່າງອອກຈາກຄວາມ
ມືດ, ແລະ ມາສູ່ຄວາມຮູ້ຂອງຜູ້ຄົນ; ແລະ
ມັນຈະເປັນໄປໂດຍອຳນາດຂອງພຣະເຈົ້າ.
17 ແລະ ຖ້າຫາກມີ [ກ]ຄວາມຜິດ ກໍເປັນ
ຄວາມຜິດພາດຂອງມະນຸດ. ແຕ່ຈົ່ງເບິ່ງ,
ພວກເຮົາຮູ້ວ່າມັນບໍ່ມີຄວາມຜິດ; ເຖິງຢ່າງ
ໃດກໍຕາມ ພຣະເຈົ້າຮູ້ທຸກສິ່ງທຸກຢ່າງ;
ສະນັ້ນ, ຜູ້ທີ່ [ຂ]ວິຈານກໍໃຫ້ຜູ້ນັ້ນລະວັງຕົວ
ໄວ້ຢ້ານວ່າເຂົາຈະຢູ່ໃນອັນຕະລາຍຂອງ
ໄຟນະລົກ.
18 ແລະ ຜູ້ທີ່ກ່າວວ່າ: ຈົ່ງສະແດງມັນຕໍ່
ເຮົາ, ຖ້າບໍ່ດັ່ງນັ້ນທ່ານຈະຖືກລົງໂທດ—ກໍ
ໃຫ້ຜູ້ນັ້ນລະວັງໄວ້ ຢ້ານວ່າເຂົາຈະສັ່ງໃນ
ສິ່ງທີ່ພຣະຜູ້ເປັນເຈົ້າຊົງຫ້າມ.
19 ເພາະຈົ່ງເບິ່ງ, ຜູ້ໃດທີ່ [ກ]ຕັດສິນຜູ້ອື່ນ
ຢ່າງຮີບດ່ວນຈະຖືກຕັດສິນຢ່າງຮີບດ່ວນຄື
ກັນ; ເພາະວ່າເຂົາຈະໄດ້ຮັບຄ່າຈ້າງຕາມ
ວຽກງານຂອງເຂົາ; ສະນັ້ນ, ຄົນທີ່ທຳຮ້າຍ
ຄົນອື່ນ ຍ່ອມຖືກພຣະຜູ້ເປັນເຈົ້າທຳຮ້າຍຄື
ກັນ.
20 ຈົ່ງເບິ່ງສິ່ງທີ່ຂໍ້ຄວາມພຣະຄຳພີກ່າວ
ໄວ້ຄື—ມະນຸດບໍ່ຄວນທຳຮ້າຍຕໍ່ກັນ, ທັງ

10 *ຂ* ມມ 1:16.
11 *ກ* 3 ນຟ 28:24–26.
12 *ກ* 3 ນຟ 26:6–11.
13 *ກ* 3 ນຟ 5:20.
14 *ກ* ມຣນ 10:1–2.
*ຂ* ຈສ—ປ 1:46.
15 *ກ* ຄພ 4:5.
16 *ກ* 2 ນຟ 3:6–7, 11, 13–14.
*ຂ* ອຊຢ 29:18;
2 ນຟ 27:29.
17 *ກ* ມມ 9:31, 33;
ອທ 12:23–28.
*ຂ* 3 ນຟ 29:5;
ອທ 4:8.
19 *ກ* ປຈສ ມທ 7:1–2 (ພາກ
ທ້ອຍທ້າຍ);
3 ນຟ 14:1–2;
ມຣນ 7:14.

ພວກເຂົາບໍ່ຄວນຕັດສິນກັນ; ເພາະວ່າການ
ຕັດສິນນັ້ນເປັນຂອງເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ, ແລະ ການແກ້ແຄ້ນເປັນຂອງເຮົາ
ນຳອີກ, ແລະ ເຮົາຈະເປັນຜູ້ຕອບແທນ.
21 ແລະ ຜູ້ໃດທີ່ເວົ້າໂດຍສະແດງຄວາມ
ໂມໂຫ ແລະ ຕໍ່ຕ້ານວຽກງານຂອງພຣະຜູ້
ເປັນເຈົ້າ, ແລະ ກໍ່ກວນຜູ້ຄົນແຫ່ງພັນທະ
ສັນຍາຂອງພຣະຜູ້ເປັນເຈົ້າ ຜູ້ເປັນເຊື້ອ
ສາຍອິດສະຣາເອນ, ແລະ ກ່າວວ່າ: ພວກ
ເຮົາຈະທຳລາຍວຽກງານຂອງພຣະຜູ້ເປັນ
ເຈົ້າ, ແລະ ພຣະຜູ້ເປັນເຈົ້າຈະບໍ່ຈື່ຈຳ
ພັນທະສັນຍາຂອງພຣະອົງ ຊຶ່ງໄດ້ເຮັດໄວ້
ກັບເຊື້ອສາຍອິດສະຣາເອນດອກ—ຜູ້ດຽວ
ກັນນັ້ນກໍຢູ່ໃນຂັ້ນອັນຕະລາຍທີ່ຈະຖືກ
ໂຄ່ນລົງ ແລະ ໂຍນເຂົ້າກອງໄຟ;
22 ເພາະວ່າ [ກ]ຈຸດປະສົງອັນເປັນນິລັນ
ດອນຂອງພຣະຜູ້ເປັນເຈົ້າຈະດຳເນີນຕໍ່ໄປ,
ຈົນກວ່າຄຳສັນຍາຂອງພຣະອົງຈະສຳເລັດ
ທັງໝົດ.
23 ຈົ່ງຄົ້ນຄວ້າຄຳທຳນາຍຂອງ [ກ]ເອຊາ
ຢາ. ຈົ່ງເບິ່ງ, ຂ້າພະເຈົ້າຂຽນໄວ້ບໍ່ໄດ້. ແທ້
ຈິງແລ້ວ, ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານ
ວ່າ ໄພ່ພົນຂອງພຣະເຈົ້າຜູ້ທີ່ຈາກໄປກ່ອນ
ຂ້າພະເຈົ້າ ຜູ້ທີ່ເຄີຍເປັນເຈົ້າຂອງແຜ່ນດິນ
ນີ້ ຈະຕ້ອງ [ຂ]ທູນຂໍຕໍ່ພຣະຜູ້ເປັນເຈົ້າ, ແທ້
ຈິງແລ້ວ, ແມ່ນຈາກພື້ນດິນ; ແລະ ຕາບ
ໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ ພຣະ
ອົງຈະນຶກເຖິງພັນທະສັນຍາທີ່ພຣະອົງໄດ້
ເຮັດໄວ້ກັບພວກເຂົາ.
24 ແລະ ພຣະອົງຮູ້ເຖິງ [ກ]ຄຳອະທິຖານ
ຂອງພວກເຂົາ ວ່າມັນເປັນໄປເພື່ອພີ່ນ້ອງ
ຂອງພວກເຂົາ. ແລະ ພຣະອົງຮູ້ຈັກສັດທາ
ຂອງພວກເຂົາ, ເພາະໃນພຣະນາມຂອງ
ພຣະອົງ ພວກເຂົາຈຶ່ງສາມາດເຄື່ອນຍ້າຍ
[ຂ]ພູໄດ້; ແລະ ໃນພຣະນາມຂອງພຣະອົງ
ພວກເຂົາຈຶ່ງສາມາດເຮັດໃຫ້ແຜ່ນດິນໂລກ
ສັ່ນສະເທືອນໄດ້, ແລະ ໂດຍອຳນາດແຫ່ງ
ພຣະຄຳຂອງພຣະອົງ ພວກເຂົາຈຶ່ງໄດ້
ເຮັດ [ຄ]ຄຸກພັງທະລາຍລົງກັບພື້ນດິນ; ແທ້
ຈິງແລ້ວ, ແມ່ນແຕ່ເຕົາໄຟຮ້ອນແຮງ ທັງ
ສັດປ່າ ແລະ ງູພິດ ກໍຍັງເຮັດອັນຕະລາຍ
ໃຫ້ພວກເຂົາບໍ່ໄດ້, ເພາະອຳນາດແຫ່ງຄຳ
ຂອງພຣະອົງ.
25 ແລະ ຈົ່ງເບິ່ງ, [ກ]ຄຳອະທິຖານຂອງ
ຄົນເຫລົ່ານັ້ນເປັນໄປເພື່ອຄົນຜູ້ທີ່ພຣະຜູ້
ເປັນເຈົ້າຈະຍອມໃຫ້ນຳເອົາສິ່ງເຫລົ່ານີ້
ອອກມາ.
26 ແລະ ບໍ່ມີຜູ້ໃດຈຳຕ້ອງເວົ້າວ່າມັນ
ຈະ ບໍ່ ມາເຖິງ, ເພາະມັນຈະມາຢ່າງ ແນ່
ນອນ, ເພາະພຣະຜູ້ເປັນເຈົ້າໄດ້ກ່າວແລ້ວ
ວ່າ ມັນຈະ [ກ]ອອກຈາກແຜ່ນດິນໂດຍພຣະ
ຫັດຂອງພຣະຜູ້ເປັນເຈົ້າ, ແລະ ບໍ່ມີຜູ້ໃດ
ຈະຢັບຢັ້ງໄດ້; ແລະ ມັນຈະມາໃນມື້ທີ່ຜູ້
ຄົນເວົ້າກັນວ່າ [ຂ]ສິ່ງມະຫັດສະຈັນໝົດໄປ
ແລ້ວ; ແລະ ມັນຈະມາຄືກັນກັບວ່າ ຜູ້ໃດຜູ້
ໜຶ່ງຈະເວົ້າອອກ [ຄ]ຈາກຄົນຕາຍ.
27 ແລະ ມັນຈະມາໃນມື້ທີ່ [ກ]ເລືອດຂອງ
ໄພ່ພົນຂອງພຣະເຈົ້າຈະຕ້ອງທູນຕໍ່ພຣະ
ຜູ້ເປັນເຈົ້າ, ເພາະ [ຂ]ການມົ້ວສຸມລັບ ແລະ
ວຽກງານແຫ່ງຄວາມມືດ.

22 ກ ຄພ 3:3.
23 ກ 3 ນຟ 20:11; 23:1.
ຂ ອຊຢ 29:4; 2 ນຟ 3:19–20; 26:16.
24 ກ ອນ 1:12–18; ມມ 9:36; ຄພ 10:46.
ຂ ຢຄ 4:6; ຮລມ 10:9.
ຄ ແອວ 14:27–29.
25 ກ ມມ 5:21.
26 ກ ອຊຢ 29:4; 2 ນຟ 33:13.
ຂ ມມ 9:15–26; ມຣນ 7:27–29, 33–37.
ຄ 2 ນຟ 26:15–16; ມມ 9:30; ມຣນ 10:27.
27 ກ ອທ 8:22–24; ຄພ 87:6–7.
ຂ ຄມພ ການມົ້ວສຸມລັບ.

28 ແທ້ ຈິງ ແລ້ວ, ມັນ ຈະ ມາ ໃນ ມື້ ທີ່
ອຳນາດຂອງພຣະເຈົ້າ ຈະຖືກປະຕິເສດ,
ແລະ [ກ]ສາດສະໜາຈັກຕ່າງໆກັບມາເສື່ອມ
ຄວາມສັກສິດ ແລະ ລະເມີເພີ້ຝັນດ້ວຍ
ຄວາມທະນົງໃຈ; ແທ້ຈິງແລ້ວ, ແມ່ນໃນວັນ
ທີ່ຜູ້ນຳຂອງສາດສະໜາຈັກ ແລະ ຜູ້ສອນ
ຈະລຸກຂຶ້ນໃນຄວາມທະນົງໃຈຂອງຕົນ,
ຈົນເຖິງການອິດສາບັງບຽດຜູ້ຄົນທີ່ເປັນ
ຂອງສາດສະໜາຈັກຂອງຄົນອື່ນ.
29 ແທ້ຈິງແລ້ວ, ມັນຈະມາໃນມື້ [ກ]ທີ່ຈະ
ໄດ້ຍິນເຖິງເລື່ອງໄຟ, ແລະ ພະຍຸຝົນຟ້າຄະ
ນອງ, ແລະ [ຂ]ອາຍຄວັນໃນຕ່າງແດນ;
30 ແລະ ຈະໄດ້ຍິນເຖິງເລື່ອງ [ກ]ສົງຄາມ,
ຂ່າວລືເລື່ອງສົງຄາມ, ແລະ ແຜ່ນດິນໄຫວ
ໃນບ່ອນຕ່າງໆນຳອີກ.
31 ແທ້ຈິງແລ້ວ, ມັນຈະມາໃນມື້ທີ່ຈະມີ
ສິ່ງສົກກະປົກທີ່ສຸດຢູ່ເທິງພື້ນແຜ່ນດິນໂລກ;
ມັນຈະມີການຄາດຕະກຳ, ແລະ ການປຸ້ນ
ຈີ້, ແລະ ການເວົ້າຕົວະ, ແລະ ການຫລອກ
ລວງ, ແລະ ການໂສເພນີ, ແລະ ການກະ
ທຳທີ່ເປັນໜ້າກຽດຊັງນາໆປະການ; ຈະ
ເປັນເວລາທີ່ຈະມີຫລາຍຄົນກ່າວວ່າ ເຮັດ
ແນວນີ້ ຫລື ເຮັດແນວນັ້ນໂລດ, ແລະ ມັນ
ຈະບໍ່ [ກ]ເປັນຫຍັງດອກ, ເພາະພຣະຜູ້ເປັນ
ເຈົ້າຈະ [ຂ]ສົ່ງເສີມການກະທຳເຊັ່ນນີ້ໃນວັນ
ສຸດທ້າຍ. ແຕ່ວິບັດແກ່ຄົນເຊັ່ນນັ້ນ, ເພາະ
ວ່າເຂົາຢູ່ໃນ [ຄ]ນ້ຳບີແຫ່ງຄວາມຂົມຂື່ນ ແລະ
ໃນພັນທະການແຫ່ງຄວາມຊົ່ວຮ້າຍ.
32 ແທ້ຈິງແລ້ວ, ມັນຈະມາໃນມື້ທີ່ຈະມີ
ສາດສະໜາຈັກຕ່າງໆຖືກສ້າງຂຶ້ນ ຊຶ່ງກ່າວ
ວ່າ: ຈົ່ງມາຫາເຮົາ, ແລະ ດ້ວຍເງິນຂອງ
ທ່ານ, ທ່ານຈະໄດ້ຮັບການອະໄພຈາກ
ບາບຂອງທ່ານ.
33 ໂອ້ ທ່ານຜູ້ເປັນຄົນຊົ່ວ ແລະ ເສຍ
ຄົນ ແລະ ແຂງຄໍເອີຍ, ດ້ວຍເຫດໃດທ່ານ
ຈຶ່ງສ້າງສາດສະໜາຈັກໃຫ້ຕົນເອງເພື່ອ
ຫາ [ກ]ຜົນປະໂຫຍດ? ດ້ວຍເຫດໃດທ່ານຈຶ່ງ
[ຂ]ປ່ຽນພຣະຄຳອັນສັກສິດຂອງພຣະເຈົ້າ
ເພື່ອທ່ານຈະໄດ້ນຳເອົາ [ຄ]ຄວາມອັບປະ
ໂຫຍດມາໃຫ້ຈິດວິນຍານຂອງທ່ານ? ຈົ່ງ
ເບິ່ງ, ທ່ານຈົ່ງພິຈາລະນາການເປີດເຜີຍ
ຂອງພຣະເຈົ້າ; ເພາະຈົ່ງເບິ່ງ, ເວລາຍ່ອມ
ມາເຖິງໃນມື້ນັ້ນ ສິ່ງເຫລົ່ານີ້ຕ້ອງສຳເລັດ
ທັງໝົດ.
34 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ສະແດງ
ເລື່ອງຍິ່ງໃຫຍ່ ແລະ ໜ້າອັດສະຈັນກ່ຽວກັບ
ສິ່ງທີ່ຈະຕ້ອງມາໃນບໍ່ຊ້ານີ້ ແກ່ຂ້າພະເຈົ້າ,
ເພາະຈົ່ງເບິ່ງ ເມື່ອເວລາມາເຖິງໃນມື້ນັ້ນ ສິ່ງ
ເຫລົ່ານີ້ຈະອອກມາໃນບັນດາພວກທ່ານ.
35 ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບທ່ານຄື
ກັບວ່າທ່ານຢູ່ຕໍ່ໜ້າຂ້າພະເຈົ້າ, ແຕ່ວ່າ
ທ່ານບໍ່ໄດ້ຢູ່. ແຕ່ຈົ່ງເບິ່ງ, ພຣະເຢຊູຄຣິດ
ໄດ້ສະແດງໃຫ້ຂ້າພະເຈົ້າເຫັນທ່ານ, ແລະ
ຂ້າພະເຈົ້າຮູ້ຈັກການກະທຳຂອງທ່ານ.
36 ແລະ ຂ້າພະເຈົ້າຮູ້ວ່າ ທ່ານໄດ້ [ກ]ເດີນ
ໄປໃນຄວາມທະນົງໃຈຂອງທ່ານ; ແລະ ມີ
ພຽງບໍ່ເທົ່າໃດຄົນເທົ່ານັ້ນທີ່ບໍ່ໄດ້ [ຂ]ຍົກຕົນ
ເອງຂຶ້ນໃນຄວາມທະນົງໃຈຂອງຕົນ ຈົນ
ເຖິງການນຸ່ງ [ຄ]ເສື້ອຜ້າທີ່ສວຍງາມຫລາຍ,
ຈົນເຖິງຂັ້ນມີການອິດສາບັງບຽດ, ແລະ

---

28 *ກ* 2 ຕມທ 3:1–7; 1 ນຟ 14:9–10; 2 ນຟ 28:3–32; ຄພ 33:4.
29 *ກ* ຢອ 2:28–32; 2 ນຟ 27:2–3.
*ຂ* 1 ນຟ 19:11; ຄພ 45:39–42.
30 *ກ* ມທ 24:6; 1 ນຟ 14:15–17.
31 *ກ* 2 ນຟ 28:21–22.
*ຂ* 2 ນຟ 28:8.
*ຄ* ແອວ 41:11.
33 *ກ* ຄມພ ການຫລອກລວງຂອງປະໂລຫິດ.
*ຂ* 1 ນຟ 13:26–29.
*ຄ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
36 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ຂ* ຢຄ 2:13.
*ຄ* ແອວ 5:53.

ການຜິດຖຽງກັນ, ແລະ ມີເຈດຕະນາຮ້າຍ
ຕໍ່ກັນ, ແລະ ຂົ່ມເຫັງ, ແລະ ເຮັດຄວາມຊົ່ວ
ຮ້າຍນາໆປະການ; ແລະ ທັງສາດສະໜາ
ຈັກຂອງທ່ານ, ແທ້ຈິງແລ້ວ, ທຸກໆບ່ອນກັບ
ມາສົກກະປົກເພາະຄວາມທະນົງໃຈຂອງ
ທ່ານ.
37 ເພາະຈົ່ງເບິ່ງ, ທ່ານຮັກ [ກ]ເງິນ, ແລະ
ຮັກເຂົ້າຂອງ ຂອງທ່ານ, ແລະ ຮັກເສື້ອຜ້າ
ທີ່ສວຍງາມຫລາຍຂອງທ່ານ, ແລະ ການ
ຕົກແຕ່ງສາດສະໜາຈັກຂອງທ່ານຫລາຍ
ກວ່າທີ່ທ່ານຮັກຄົນຍາກຈົນ ແລະ ຄົນຂັດ
ສົນ, ຄົນເຈັບປ່ວຍ, ແລະ ຄົນທີ່ເປັນທຸກ.
38 ໂອ້ ທ່ານຄົນສົກກະປົກ, ທ່ານຄົນໜ້າ
ຊື່ໃຈຄົດ, ທ່ານຜູ້ສອນ, ຜູ້ຊຶ່ງຂາຍຕົວເພື່ອ
ສິ່ງທີ່ຈະເນົ່າເປື່ອຍໄດ້, ດ້ວຍເຫດໃດທ່ານ
ຈຶ່ງເຮັດໃຫ້ສາດສະໜາຈັກທີ່ບໍລິສຸດຂອງ
ພຣະເຈົ້ານັ້ນສົກກະປົກ? ດ້ວຍເຫດໃດ
ທ່ານຈຶ່ງ [ກ]ອັບອາຍທີ່ຈະຮັບເອົາພຣະນາມ
ຂອງພຣະຄຣິດ? ດ້ວຍເຫດໃດທ່ານຈຶ່ງບໍ່
ຄິດວ່າຄຸນຄ່າຂອງຄວາມສຸກອັນບໍ່ມີບ່ອນ
ຈົບນັ້ນສຳຄັນກວ່າ [ຂ]ຄວາມທຸກທໍລະມານ
ຊຶ່ງບໍ່ເຄີຍຕາຍ—ຍ້ອນວ່າ [ຄ]ຄຳສັນລະເສີນ
ຂອງໂລກບໍ?
39 ດ້ວຍ ເຫດ ໃດ ທ່ານ ຈຶ່ງ ຕົກ ແຕ່ງ ຕົວ
ດ້ວຍ ສິ່ງ ທີ່ບໍ່ມີຊີວິດ, ແລະ ຍັງ ຍອມ ໃຫ້
ຄົນຫິວໂຫຍ, ແລະ ຄົນຂັດສົນ, ແລະ ຄົນ
ເປືອຍເປົ່າ, ແລະ ຄົນເຈັບປ່ວຍ, ແລະ ຄົນ
ທີ່ເປັນທຸກຜ່ານທ່ານໄປ, ແລະ ບໍ່ຫລຽວແລ
ພວກເຂົາ?
40 ແທ້ຈິງ ແລ້ວ, ດ້ວຍ ເຫດ ໃດ ທ່ານ ຈຶ່ງ
ສ້າງ [ກ]ຄວາມໜ້າກຽດຊັງອັນລີ້ລັບຂຶ້ນເພື່ອ
ຫາຜົນປະໂຫຍດ, ແລະ ເຮັດໃຫ້ແມ່ໝ້າຍ
ຕ້ອງໂສກເສົ້າຕໍ່ພຣະພັກຂອງພຣະຜູ້ເປັນ
ເຈົ້າ, ແລະ ເຮັດໃຫ້ເດັກກຳພ້າຕ້ອງໂສກ
ເສົ້າຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, ແລະ
ເຮັດໃຫ້ເລືອດພໍ່ຂອງພວກເຂົາ ແລະ ສາມີ
ຂອງພວກເຂົາຕ້ອງຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າຈາກພື້ນດິນ, ເພື່ອການແກ້ແຄ້ນເທິງ
ຫົວຂອງທ່ານ?
41 ຈົ່ງ ເບິ່ງ, ດາບ ແຫ່ງ ການ ແກ້ ແຄ້ນ
ແຂວນຢູ່ເທິງຫົວທ່ານ; ແລະ ເວລາຈະມາ
ເຖິງ ໃນ ບໍ່ ຊ້ານີ້ ທີ່ພຣະອົງຈະ [ກ]ແກ້ແຄ້ນ
ທ່ານ ແທນ ເລືອດຂອງໄພ່ພົນ ຂອງພຣະ
ເຈົ້າ, ເພາະວ່າພຣະອົງ ຈະ ບໍ່ ທົນ ຕໍ່ການ
ຮ້ອງຂໍຂອງພວກເຂົາອີກຕໍ່ໄປ.

## ບົດທີ 9

*ໂມໂຣໄນເຊື້ອເຊີນຜູ້ທີ່ບໍ່ເຊື່ອໃນພຣະຄຣິດໃຫ້ກັບ ໃຈ—ເພິ່ນ ໃຫ້ຖ້ອຍ ຄຳ ເຖິງພຣະເຈົ້າແຫ່ງສິ່ງມະຫັດສະຈັນ, ຜູ້ມອບການເປີດເຜີຍ ແລະ ຖອກເທຂອງປະທານ ແລະເຄື່ອງ ໝາຍ ເທິງຜູ້ທີ່ ຊື່ສັດ—ສິ່ງມະຫັດສະຈັນຢຸດລົງກໍເພາະວ່າຄວາມບໍ່ເຊື່ອຖື—ເຄື່ອງໝາຍຈະຕິດຕາມໄປກັບຜູ້ທີ່ເຊື່ອ—ມະນຸດຖືກຕັກເຕືອນໃຫ້ເປັນຄົນສະຫລາດແລະ ຮັກສາພຣະບັນຍັດ. ປະມານ ຄ.ສ. 401–421.*

1 ແລະ ບັດນີ້, ຂ້າພະເຈົ້າຂໍເວົ້າກ່ຽວກັບ
ຄົນທີ່ບໍ່ເຊື່ອໃນພຣະຄຣິດນຳອີກ.
2 ຈົ່ງເບິ່ງ, ທ່ານຈະເຊື່ອໃນມື້ແຫ່ງການ
ສະເດັດມາຢ້ຽມຢາມທ່ານຫລືບໍ່—ຈົ່ງເບິ່ງ,
ເວລາພຣະຜູ້ເປັນເຈົ້າສະເດັດມາ, ແທ້ຈິງ
ແລ້ວ, ແມ່ນໃນ [ກ]ວັນອັນຍິ່ງໃຫຍ່ນັ້ນ ເມື່ອ

37 *ກ* 2 ນຟ 28:9–16.
38 *ກ* ຣມ 1:16; 2 ຕມທ 1:8; 1 ນຟ 8:25–28; ແອວ 46:21.
*ຂ* ມຊຢ 3:25.
*ຄ* 1 ນຟ 13:9.
40 *ກ* ຄມພ ການມົ້ວສຸມລັບ.
41 *ກ* 1 ນຟ 22:14.
**9** 2 *ກ* ມລກ 4:5; 3 ນຟ 28:31.

[ຂ]ແຜ່ນດິນໂລກຈະຖືກກໍ້ເຂົ້າກັນຄືກັນກັບ
ມ້ວນກະດາດ, ແລະ ທາດຕ່າງໆຈະ [ຄ]ລະ
ລາຍດ້ວຍຄວາມຮ້ອນອັນແຮງກ້າ, ແທ້ຈິງ
ແລ້ວ, ໃນມື້ຍິ່ງໃຫຍ່ນັ້ນ ທ່ານຈະຖືກນຳມາ
ຢືນຢູ່ຕໍ່ໜ້າພຣະພັກຂອງພຣະເມສານ້ອຍ
ຂອງພຣະເຈົ້າ—ເວລານັ້ນທ່ານຈະກ່າວບໍ
ວ່າບໍ່ມີພຣະເຈົ້າ?
3 ເວລານັ້ນທ່ານຍັງຈະປະຕິເສດພຣະ
ຄຣິດອີກຢູ່ບໍ ຫລື ທ່ານຈະສາມາດຫລຽວ
ເບິ່ງພຣະເມສານ້ອຍຂອງພຣະເຈົ້າໄດ້ບໍ?
ທ່ານຄິດບໍວ່າທ່ານຈະສາມາດຢູ່ກັບພຣະ
ອົງພາຍໃຕ້ຄວາມສຳນຶກຜິດຂອງທ່ານ
ໄດ້? ທ່ານຄິດບໍວ່າ ທ່ານຈະມີຄວາມສຸກທີ່
ຈະຢູ່ກັບພຣະອົງຜູ້ບໍລິສຸດອົງນັ້ນໄດ້ ເມື່ອ
ຈິດວິນຍານຂອງທ່ານທໍລະມານຢູ່ດ້ວຍ
ຄວາມສຳນຶກຜິດວ່າ ທ່ານເຄີຍເຮັດຜິດຕໍ່
ກົດຂອງພຣະອົງ?
4 ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ
ທ່ານຈະທຸກທໍລະມານໃຈທີ່ຈະຢູ່ກັບພຣະ
ເຈົ້າຜູ້ບໍລິສຸດ ແລະ ທ່ຽງທຳພາຍໃຕ້ຄວາມ
ສຳນຶກຜິດໃນຄວາມສົກກະປົກຂອງທ່ານ
ຕໍ່ພຣະພັກຂອງພຣະອົງ, ຍິ່ງກວ່າທ່ານ
ຈະຢູ່ກັບຈິດວິນຍານທີ່ [ກ]ອັບປະໂຫຍດໃນ
[ຂ]ນະລົກ.
5 ເພາະຈົ່ງເບິ່ງ, ເມື່ອທ່ານຖືກນຳມາໃຫ້
ເຫັນ [ກ]ຄວາມເປືອຍເປົ່າຂອງທ່ານຕໍ່ພຣະ
ພັກຂອງພຣະເຈົ້າ, ແລະ ໃຫ້ເຫັນລັດສະໝີ
ພາບຂອງພຣະເຈົ້ານຳອີກ, ແລະ ໃຫ້ເຫັນ
ຄວາມບໍລິສຸດຂອງພຣະເຢຊູຄຣິດ, ມັນຈະ
ເຮັດໃຫ້ເກີດແປວໄຟທີ່ບໍ່ຮູ້ມອດຢູ່ໃນຕົວ
ທ່ານ.
6 ໂອ້ ແລ້ວທ່ານ [ກ]ຜູ້ບໍ່ເຊື່ອ, ທ່ານຈົ່ງ [ຂ]ຫັນ
ມາຫາພຣະຜູ້ເປັນເຈົ້າ; ຈົ່ງທູນຂໍຕໍ່ພຣະ
ບິດາຢ່າງສຸດກຳລັງໃນພຣະນາມຂອງພຣະ
ເຢຊູ ເພື່ອທ່ານອາດຈະພົບວ່າທ່ານບໍ່ມີ
ມົນທິນ ມີແຕ່ [ຄ]ຄວາມບໍລິສຸດ, ຄວາມງາມ,
ແລະ ຄວາມຂາວ, ໂດຍຖືກເຮັດໃຫ້ສະອາດ
ແລ້ວດ້ວຍໂລຫິດຂອງ [ງ]ພຣະເມສານ້ອຍ
ໃນວັນອັນຍິ່ງໃຫຍ່ ແລະ ສຸດທ້າຍນັ້ນ.
7 ແລະ ອີກເທື່ອໜຶ່ງ ຂ້າພະເຈົ້າຂໍເວົ້າ
ກັບທ່ານຜູ້ [ກ]ປະຕິເສດການເປີດເຜີຍຂອງ
ພຣະເຈົ້າ, ແລະ ເວົ້າວ່າມັນໝົດໄປແລ້ວ,
ວ່າບໍ່ມີການເປີດເຜີຍ, ຫລື ການທຳນາຍ,
ຫລື ຂອງປະທານ, ຫລື ການປິ່ນປົວ, ຫລື
ການເວົ້າດ້ວຍພາສາອື່ນ, ແລະ [ຂ]ການແປ
ຄວາມໝາຍຂອງພາສາອື່ນ;
8 ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານວ່າ
ຄົນທີ່ປະຕິເສດສິ່ງເຫລົ່ານີ້ບໍ່ຮູ້ຈັກ [ກ]ພຣະ
ກິດຕິຄຸນຂອງພຣະຄຣິດ; ແທ້ຈິງແລ້ວ,
ເຂົາບໍ່ໄດ້ອ່ານພຣະຄຳພີ; ຖ້າຫາກອ່ານ
ເຂົາກໍບໍ່ [ຂ]ເຂົ້າໃຈມັນ.
9 ເຮົາບໍ່ໄດ້ອ່ານບໍວ່າ ພຣະເຈົ້າເປັນ
[ກ]ເໝືອນກັນເຊັ່ນມື້ວານນີ້, ມື້ນີ້, ແລະ
ຕະຫລອດການ, ແລະ ໃນພຣະອົງບໍ່ມີ
ຄວາມຜັນແປ ທັງບໍ່ມີເງົາຂອງຄວາມປ່ຽນ
ແປງເລີຍ?

2 *ຂ* ມມ 5:23;
ຄພ 63:20–21.
ຄມພ ໂລກ—ທີ່
ສຸດຂອງໂລກ.
*ຄ* ອມ 9:13;
3 ນຟ 26:3.
4 *ກ* ຄມພ ອັບປະໂຫຍດ,
ຄວາມອັບປະໂຫຍດ.
*ຂ* ຄມພ ນະລົກ.
5 *ກ* 2 ນຟ 9:14.
6 *ກ* ຄມພ ບໍ່ເຊື່ອຖື,
ຄວາມບໍ່ເຊື່ອຖື.
*ຂ* ອຊກ 18:23, 32;
ຄພ 98:47.
*ຄ* ຄມພ ບໍລິສຸດ, ຜູ້ບໍລິ
ສຸດ, ຄວາມບໍລິສຸດ.
*ງ* ຄມພ ພຣະເມສານ້ອຍ
ຂອງພຣະເຈົ້າ.
7 *ກ* 3 ນຟ 29:6–7.
*ຂ* 1 ກຣທ 12:7–10;
ຫຼຊ 1:7.
8 *ກ* ຄມພ ພຣະກິດຕິຄຸນ.
*ຂ* ມທ 22:29.
9 *ກ* ຮຣ 13:8;
1 ນຟ 10:18–19;
ແອວ 7:20;
ມຣນ 8:18;
ຄພ 20:12.

10 ແລະ ບັດນີ້, ຖ້າຫາກທ່ານນຶກຄິດໃຫ້ຕົວເອງເຖິງພຣະເຈົ້າທີ່ຜັນແປໄດ້, ແລະ ໃນພຣະເຈົ້ານັ້ນມີເງົາຂອງຄວາມປ່ຽນແປງ ເວລານັ້ນທ່ານກໍນຶກຄິດໃຫ້ຕົນເອງເຖິງພຣະຜູ້ເປັນເຈົ້າຊຶ່ງບໍ່ແມ່ນພຣະເຈົ້າແຫ່ງສິ່ງມະຫັດສະຈັນ.

11 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຈະສະແດງພຣະເຈົ້າແຫ່ງສິ່ງມະຫັດສະຈັນແກ່ທ່ານ, ເຖິງແມ່ນພຣະເຈົ້າຂອງອັບຣາຮາມ, ແລະ ພຣະເຈົ້າຂອງອີຊາກ, ແລະ ພຣະເຈົ້າຂອງຢາໂຄບ; ແລະ ຄື [ກ]ພຣະເຈົ້າອົງດຽວກັນນັ້ນທີ່ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, ແລະ ທຸກສິ່ງທຸກຢ່າງທີ່ຢູ່ໃນນັ້ນ.

12 ຈົ່ງເບິ່ງ, ພຣະອົງໄດ້ສ້າງອາດາມ, ແລະ ເປັນຍ້ອນ [ກ]ອາດາມ [ຂ]ການຕົກຂອງມະນຸດຈຶ່ງມີມາ. ແລະ ເປັນຍ້ອນການຕົກຂອງມະນຸດ ພຣະເຢຊູຄຣິດຈຶ່ງສະເດັດມາ, ຜູ້ເປັນພຣະບິດາ ແລະ ພຣະບຸດ; ແລະ ເປັນຍ້ອນພຣະເຢຊູຄຣິດ [ຄ]ການໄຖ່ຂອງມະນຸດຈຶ່ງມີມາ.

13 ແລະ ເປັນຍ້ອນການໄຖ່ຂອງມະນຸດ, ຊຶ່ງມາໂດຍພຣະເຢຊູຄຣິດ, ຄົນທັງຫລາຍຈຶ່ງຖືກນຳກັບໄປຫາທີ່ປະທັບຂອງພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ດ້ວຍການນີ້ມະນຸດທັງປວງຈຶ່ງຖືກໄຖ່, ເປັນຍ້ອນການສິ້ນພຣະຊົນຂອງພຣະຄຣິດ ຈຶ່ງເຮັດໃຫ້ເກີດ [ກ]ການຟື້ນຄືນຊີວິດ, ຊຶ່ງເຮັດໃຫ້ເກີດການໄຖ່ເພື່ອໃຫ້ພົ້ນຈາກການ [ຂ]ນອນຫລັບອັນບໍ່ມີວັນສິ້ນສຸດ, ຊຶ່ງເມື່ອເວລາສຽງແກດັງຂຶ້ນ ອຳນາດຂອງພຣະເຈົ້າຈະປຸກມະນຸດທັງປວງໃຫ້ຕື່ນຈາກການນອນຫລັບ; ແລະ ຄົນທັງຫລາຍຈະອອກມາ ທັງຜູ້ນ້ອຍ ແລະ ຜູ້ໃຫຍ່, ແລະ ທຸກຄົນຈະຢືນຢູ່ຕໍ່ໜ້າບ່ອນພິພາກສາຂອງພຣະອົງ ໂດຍຖືກໄຖ່ ແລະ ຫລຸດຈາກ [ຄ]ສາຍຮັດແຫ່ງຄວາມຕາຍຊົ່ວນິລັນດອນ, ຊຶ່ງຄວາມຕາຍນັ້ນເປັນຄວາມຕາຍທາງໂລກ.

14 ແລະ ເວລານັ້ນ [ກ]ການພິພາກສາຂອງພຣະຜູ້ບໍລິສຸດຈະມາຫາພວກເຂົາ; ແລະ ເວລານັ້ນຄົນທີ່ [ຂ]ສົກກະປົກຈະຄົງສົກກະປົກຢູ່ຄືເກົ່າ; ແລະ ຄົນທີ່ຊອບທຳຈະຄົງຊອບທຳຢູ່ຄືເກົ່າ; ແລະ ຄົນທີ່ເປັນສຸກຈະຄົງເປັນສຸກຢູ່ຄືເກົ່າ; ແລະ ຄົນທີ່ບໍ່ເປັນສຸກກໍຄົງບໍ່ເປັນສຸກຢູ່ຄືເກົ່າ.

15 ແລະ ບັດນີ້, ໂອ້ ທ່ານທັງຫລາຍທີ່ນຶກຄິດໃຫ້ຕົນເອງວ່າ ພຣະເຈົ້າຈະເຮັດ [ກ]ສິ່ງມະຫັດສະຈັນບໍ່ໄດ້, ຂ້າພະເຈົ້າຈະຖາມທ່ານວ່າ ສິ່ງທັງໝົດທີ່ຂ້າພະເຈົ້າເວົ້າມານີ້ເກີດຂຶ້ນແລ້ວບໍ? ເວລາສຸດທ້າຍມາຮອດແລ້ວບໍ? ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານວ່າ ຍັງບໍ່ທັນມາຮອດເທື່ອ; ແລະ ພຣະເຈົ້າຍັງບໍ່ເຊົາເປັນພຣະເຈົ້າແຫ່ງສິ່ງມະຫັດສະຈັນເທື່ອ.

16 ຈົ່ງເບິ່ງ, ສິ່ງທີ່ພຣະເຈົ້າກະທຳບໍ່ໄດ້ເປັນໜ້າມະຫັດສະຈັນແກ່ສາຍຕາຂອງພວກເຮົາບໍ? ແທ້ຈິງແລ້ວ, ແລະ ແມ່ນໃຜທີ່ຈະເຂົ້າໃຈ [ກ]ວຽກງານອັນໜ້າອັດສະຈັນຂອງພຣະເຈົ້າໄດ້?

11 *ກ* ປຖກ 1:1; ມຊຢ 4:2; ຄພ 76:20–24. ຄມພ ພຣະເຢຊູຄຣິດ.
12 *ກ* ມຊຢ 3:26.
*ຂ* ຄມພ ການຕົກຂອງອາດາມ ແລະ ເອວາ.
*ຄ* ຄມພ ໄຖ່, ການໄຖ່, ຖືກໄຖ່.
13 *ກ* ຮລມ 14:15–18.
*ຂ* ຄພ 43:18.
*ຄ* ຄພ 138:16.
14 *ກ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຂ* ແອວ 7:21; ຄພ 88:35.
15 *ກ* ມຣນ 7:35–37; ຄພ 35:8. ຄມພ ມະຫັດສະຈັນ, ການມະຫັດສະຈັນ.
16 *ກ* ພສສ 40:5; ຄພ 76:114; ມຊ 1:3–5.

17 ຜູ້ໃດຈະເວົ້າວ່າ ມັນບໍ່ແມ່ນສິ່ງມະຫັດສະຈັນ ຊຶ່ງໂດຍ [ກ]ພຣະຄຳຂອງພຣະອົງ ຟ້າສະຫວັນ ແລະ ແຜ່ນດິນໂລກຈຶ່ງຖືກສ້າງຂຶ້ນ; ແລະ ໂດຍອຳນາດຂອງຄຳຂອງພຣະຜູ້ສ້າງ ມະນຸດຈຶ່ງຖືກ [ຂ]ສ້າງຂຶ້ນດ້ວຍ [ຄ]ຂີ້ຝຸ່ນຂອງແຜ່ນດິນໂລກ; ແລະ ໂດຍອຳນາດຂອງຄຳຂອງພຣະອົງ ສິ່ງມະຫັດສະຈັນຈຶ່ງເກີດຂຶ້ນ?

18 ແລະ ຜູ້ໃດຈະເວົ້າວ່າ ພຣະເຢຊູຄຣິດບໍ່ໄດ້ເຮັດ [ກ]ສິ່ງມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງ? ແລະ ມີສິ່ງມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງເກີດຂຶ້ນໂດຍມືຂອງອັກຄະສາວົກ.

19 ແລະ ຖ້າຫາກມີ [ກ]ສິ່ງມະຫັດສະຈັນກະທຳຂຶ້ນໃນສະໄໝນັ້ນ, ດ້ວຍເຫດໃດພຣະເຈົ້າຈຶ່ງຈະເລີກເປັນພຣະເຈົ້າແຫ່ງສິ່ງມະຫັດສະຈັນ ແລະ ຍັງເປັນອົງຜູ້ບໍ່ປ່ຽນແປງຢູ່ໄປເລື້ອຍໆ? ແລະ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ ພຣະອົງບໍ່ປ່ຽນແປງ; ຖ້າຫາກມີການປ່ຽນແປງ ພຣະອົງຈະເລີກເປັນພຣະເຈົ້າ; ແລະ ພຣະອົງຈະບໍ່ເລີກເປັນພຣະເຈົ້າ, ແລະ ພຣະອົງເປັນພຣະເຈົ້າແຫ່ງສິ່ງມະຫັດສະຈັນຢູ່.

20 ແລະ ເຫດຜົນທີ່ພຣະອົງເລີກເຮັດ [ກ]ສິ່ງມະຫັດສະຈັນໃນບັນດາລູກຫລານມະນຸດ ເປັນເພາະວ່າພວກເຂົາເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື, ແລະ ອອກຈາກທິດທາງທີ່ຖືກຕ້ອງ, ແລະ ບໍ່ຮູ້ຈັກພຣະເຈົ້າຜູ້ຊຶ່ງພວກເຂົາຄວນ [ຂ]ໄວ້ວາງໃຈ.

21 ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ ຜູ້ໃດກໍຕາມທີ່ເຊື່ອໃນພຣະຄຣິດ, ໂດຍບໍ່ສົງໄສຈັກດີ້, [ກ]ສິ່ງໃດກໍຕາມທີ່ເຂົາຂໍຈາກພຣະບິດາໃນພຣະນາມຂອງພຣະຄຣິດ ເຂົາຈະໄດ້ຮັບສິ່ງນັ້ນ; ແລະ ຄຳສັນຍານີ້ກັບຄົນທັງປວງ, ເຖິງແມ່ນທີ່ສຸດຂອງແຜ່ນດິນໂລກ.

22 ເພາະຈົ່ງເບິ່ງ, ພຣະເຢຊູຄຣິດພຣະບຸດຂອງພຣະເຈົ້າໄດ້ກ່າວດັ່ງນັ້ນກັບສານຸສິດຂອງພຣະອົງຜູ້ທີ່ຈະຄົງຢູ່ຕໍ່ໄປ, ແທ້ຈິງແລ້ວ, ແລະ ກັບສານຸສິດທັງໝົດຂອງພຣະອົງ ຊຶ່ງຝູງຊົນໄດ້ຍິນວ່າ: ທ່ານຈົ່ງ [ກ]ອອກໄປທົ່ວໂລກ, ແລະ ຈົ່ງສັ່ງສອນພຣະກິດຕິຄຸນໃຫ້ແກ່ມະນຸດທຸກຄົນ;

23 ແລະ ຄົນທີ່ເຊື່ອ ແລະ ຮັບບັບຕິສະມາຈະລອດ, ແຕ່ຄົນທີ່ບໍ່ເຊື່ອຈະ [ກ]ອັບປະໂຫຍດ;

24 ແລະ [ກ]ເຄື່ອງໝາຍເຫລົ່ານີ້ຈະຕິດຕາມຄົນທີ່ເຊື່ອໄປ—ໃນພຣະນາມຂອງເຮົາ ເຂົາຈະຂັບໄລ່ [ຂ]ຜີສາດອອກໄປ; ເຂົາຈະເວົ້າອອກມາເປັນພາສາອື່ນ; ແລະ ເຂົາຈະຈັບງູໄດ້; ແລະ ຖ້າຫາກເຂົາດື່ມສິ່ງທີ່ເປັນພິດ ມັນຈະບໍ່ເປັນອັນຕະລາຍແກ່ເຂົາ; ເຂົາຈະເອົາ [ຄ]ມືວາງໃສ່ຄົນປ່ວຍໄຂ້ ແລະ ຄົນປ່ວຍຈະຫາຍດີ;

25 ແລະ ຜູ້ໃດກໍຕາມທີ່ເຊື່ອໃນນາມຂອງເຮົາ, ໂດຍບໍ່ສົງໄສຈັກດີ້, ເຮົາຈະ [ກ]ຢືນຢັນຄຳເວົ້າຂອງເຮົາທັງໝົດກັບເຂົາ, ເຖິງກັບທີ່ສຸດຂອງແຜ່ນດິນໂລກ.

---

17 *ກ* ຢຄ 4:9.
*ຂ* ຄມພ ສ້າງ, ການສ້າງ.
*ຄ* ປຖກ 2:7; ມຊຢ 2:25.
18 *ກ* ຢຣ 6:14.
19 *ກ* ຄພ 63:7–10.
20 *ກ* ຜປ 6:11–13; ອທ 12:12–18; ມຣນ 7:35–37.
*ຂ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
21 *ກ* ມທ 21:22; 3 ນຟ 18:20.
22 *ກ* ມຣກ 16:15–16. ຄມພ ວຽກງານເຜີຍແຜ່.
23 *ກ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
24 *ກ* ມຣກ 16:17–18. ຄມພ ເຄື່ອງໝາຍ.
*ຂ* ກຈກ 16:16–18.
*ຄ* ຄມພ ການປະຕິບັດຕໍ່ຄົນເຈັບປ່ວຍ.
25 *ກ* ຄມພ ປະຈັກພະຍານ; ເປີດເຜີຍ, ການເປີດເຜີຍ.

26 ແລະ ບັດນີ້, ຈົ່ງເບິ່ງຜູ້ໃດຈະສາມາດ
ຢືນຕໍ່ຕ້ານວຽກງານຂອງພຣະຜູ້ເປັນເຈົ້າ
ໄດ້? [ກ]ຜູ້ໃດຈະສາມາດປະຕິເສດຄຳຂອງ
ພຣະຜູ້ເປັນເຈົ້າໄດ້? ຜູ້ໃດຈະລຸກຂຶ້ນຕໍ່
ຕ້ານອຳນາດທີ່ຊົງລິດຍິ່ງໃຫຍ່ຂອງພຣະຜູ້
ເປັນເຈົ້າ? ຜູ້ໃດຈະໝິ່ນປະໝາດວຽກງານ
ຂອງພຣະຜູ້ເປັນເຈົ້າ? ຜູ້ໃດຈະດູໝິ່ນລູກໆ
ຂອງພຣະຄຣິດ? ຈົ່ງເບິ່ງ, ທ່ານທັງຫລາຍ
ຜູ້ [ຂ]ໝິ່ນປະໝາດວຽກງານຂອງພຣະຜູ້ເປັນ
ເຈົ້າ, ທ່ານນັ້ນແຫລະຈະແປກໃຈ ແລະ ຈະ
ຕາຍ.
27 ໂອ້ ດັ່ງນັ້ນແລ້ວ, ຈົ່ງຢ່າໄດ້ໝິ່ນປະ
ໝາດເລີຍ, ແລະ ຢ່າໄດ້ແປກໃຈເລີຍ, ແຕ່
ຈົ່ງເຊື່ອຟັງພຣະຄຳຂອງພຣະຜູ້ເປັນເຈົ້າ
ແລະ ໃຫ້ທູນຂໍພຣະບິດາໃນພຣະນາມ
ຂອງພຣະເຢຊູ ເພື່ອສິ່ງໃດກໍຕາມທີ່ທ່ານ
ຕ້ອງການ, ຢ່າສົງໄສເລີຍ, ແຕ່ຈົ່ງເຊື່ອ,
ແລະ ເລີ່ມຕົ້ນຄືກັນກັບໃນຄາວກ່ອນ, ແລະ
[ກ]ມາຫາພຣະຜູ້ເປັນເຈົ້າດ້ວຍສຸດ [ຂ]ໃຈ,
ແລະ [ຄ]ເຮັດວຽກງານຂອງຄວາມລອດໃຫ້
ຕົນເອງດ້ວຍຄວາມຢ້ານກົວ ແລະ ຕົວສັ່ນ
ຕໍ່ພຣະພັກຂອງພຣະອົງ.
28 ຈົ່ງ [ກ]ສະຫລາດໃນວັນເວລາແຫ່ງ
ການທົດລອງຂອງທ່ານ; ຈົ່ງເອົາຕົວ
ອອກໃຫ້ຫ່າງໄກຈາກສິ່ງທີ່ບໍ່ສະອາດທັງ
ໝົດ; ຢ່າໄດ້ຂໍເພື່ອທ່ານຈະໄດ້ໃຊ້ຈ່າຍ
ເພື່ອ [ຂ]ຄວາມໄຄ່ຂອງທ່ານ, ແຕ່ໃຫ້ຂໍດ້ວຍ
ຄວາມໝັ້ນຄົງອັນບໍ່ຫວັ່ນໄຫວ, ເພື່ອທ່ານ
ຈະບໍ່ໄດ້ຍອມຕໍ່ການລໍ້ລວງ, ແຕ່ວ່າເພື່ອ
ທ່ານຈະໄດ້ຮັບໃຊ້ [ຄ]ພຣະເຈົ້າອົງທີ່ທ່ຽງແທ້
ແລະ ຊົງພຣະຊົນຢູ່.
29 ຈົ່ງເບິ່ງວ່າ ທ່ານຈະບໍ່ຮັບບັບຕິສະມາ
ໂດຍ [ກ]ບໍ່ມີຄ່າຄວນ; ຈົ່ງເບິ່ງວ່າທ່ານຈະບໍ່
ຮັບສ່ວນສິນລະລຶກຂອງພຣະຄຣິດໂດຍ
[ຂ]ບໍ່ມີຄ່າຄວນ; ແຕ່ຈົ່ງເບິ່ງວ່າທ່ານຈະເຮັດ
ທຸກສິ່ງທຸກຢ່າງດ້ວຍຄວາມ [ຄ]ມີຄ່າຄວນ,
ແລະ ເຮັດໃນພຣະນາມຂອງພຣະເຢຊູ
ຄຣິດ; ພຣະບຸດຂອງພຣະເຈົ້າຜູ້ຊົງພຣະ
ຊົນຢູ່, ແລະ ຖ້າຫາກທ່ານເຮັດເຊັ່ນນີ້ ແລະ
ອົດທົນຈົນເຖິງທີ່ສຸດ, ແລ້ວທ່ານຈະບໍ່ມີ
ທາງທີ່ຈະຖືກຂັບໄລ່ອອກໄປເລີຍ.
30 ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບທ່ານຄື
ກັນກັບຂ້າພະເຈົ້າ [ກ]ເວົ້າຈາກຄົນຕາຍ;
ເພາະຂ້າພະເຈົ້າຮູ້ວ່າ ທ່ານຈະໄດ້ຍິນຄຳ
ເວົ້າຂອງຂ້າພະເຈົ້າ.
31 ຢ່າໄດ້ກ່າວໂທດຂ້າພະເຈົ້າຍ້ອນ
[ກ]ຄວາມຂາດຕົກບົກພ່ອງຂອງຂ້າພະເຈົ້າ,
ທັງບິດາຂອງຂ້າພະເຈົ້າເພາະຄວາມຂາດ
ຕົກບົກພ່ອງຂອງເພິ່ນ, ທັງຄົນທີ່ຂຽນໄວ້
ກ່ອນເພິ່ນເລີຍ; ແຕ່ທາງທີ່ດີຈົ່ງຖວາຍ
ຄວາມຂອບຄຸນແດ່ພຣະເຈົ້າທີ່ພຣະອົງໄດ້
ສະແດງຄວາມຂາດຕົກບົກພ່ອງຂອງພວກ
ເຮົາໃຫ້ປະຈັກແກ່ທ່ານ, ເພື່ອວ່າທ່ານຈະ
ໄດ້ຮຽນຮູ້ໃຫ້ຮອບຄອບດີກວ່າທີ່ພວກເຮົາ
ເປັນມາ.
32 ແລະ ບັດນີ້, ຈົ່ງເບິ່ງພວກເຮົາໄດ້
ຂຽນບັນທຶກນີ້ຕາມຄວາມຮູ້ຄວາມສາມາດ
ຂອງພວກເຮົາ, ດ້ວຍອັກຂະລະຊຶ່ງເອີ້ນ

26 *ກ* 3 ນຟ 29:4–7.
*ຂ* ສພສ 13:13.
27 *ກ* ມຣນ 10:30–32.
*ຂ* ຢຊ 22:5; ຄພ 64:22, 34. ຄມພ ໃຈ.
*ຄ* ຟລປ 2:12.
28 *ກ* ຢຄ 6:12.
*ຂ* ຄມພ ກິເລດຕັນຫາ.
*ຄ* ແອວ 5:13.
29 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ເງື່ອນໄຂສຳລັບການບັບຕິສະມາ.
*ຂ* 1 ກຣທ 11:27–30; 3 ນຟ 18:28–32.
*ຄ* ຄມພ ຄ່າຄວນ, ການມີຄ່າຄວນ.
30 *ກ* ມມ 8:26; ມຣນ 10:27.
31 *ກ* ມມ 8:17; ອທ 12:22–28, 35.

ກັນໃນບັນດາພວກເຮົາວ່າ ພາສາເອຢິບທີ່
[ກ]ປັບປຸງໃໝ່, ໂດຍໄດ້ຖືກມອບຕໍ່ໆກັນມາ
ແລະ ປ່ຽນແປງໄປຕາມວິທີເວົ້າຂອງພວກ
ເຮົາ.
33 ແລະ ຖ້າຫາກແຜ່ນຈາລຶກຂອງພວກ
ເຮົາໃຫຍ່ພໍ, ພວກເຮົາອາດຈະຂຽນເປັນພາ
ສາເຮັບເຣີ; ແຕ່ພວກເຮົາກໍໄດ້ປ່ຽນແປງພາ
ສາເຮັບເຣີນຳອີກ; ແລະ ຖ້າຫາກພວກເຮົາ
ຂຽນເປັນພາສາເຮັບເຣີໄດ້, ຈົ່ງເບິ່ງ, ທ່ານ
ຈະບໍ່ພົບຄວາມຂາດຕົກບົກພ່ອງໃນບັນ
ທຶກຂອງພວກເຮົາເລີຍ.
34 ແຕ່ພຣະ ຜູ້ເປັນ ເຈົ້າ ຮູ້ ຈັກ ເລື່ອງ ທີ່
ພວກເຮົາຂຽນໄວ້, ແລະ ຮູ້ອີກວ່າ ບໍ່ມີບຸກ
ຄົນອື່ນໃດຮູ້ພາສາຂອງພວກເຮົາ; ແລະ
ດ້ວຍເຫດວ່າບໍ່ມີບຸກຄົນໃດຮູ້ພາສາຂອງ
ພວກເຮົາ, ສະນັ້ນ ພຣະອົງຈຶ່ງຈະຕຽມ
[ກ]ທາງເພື່ອການແປຄວາມໝາຍນັ້ນ.
35 ແລະ ເລື່ອງເຫລົ່ານີ້ມີຂຽນໄວ້ເພື່ອ
ພວກເຮົາຈະໄດ້ກຳຈັດເລືອດຂອງພີ່ນ້ອງ
ຜູ້ເສື່ອມໂຊມຢູ່ໃນ [ກ]ຄວາມບໍ່ເຊື່ອຖືອອກ
ຈາກອາພອນຂອງພວກເຮົາ.
36 ແລະ ຈົ່ງເບິ່ງ, ນີ້ຄືສິ່ງທີ່ພວກເຮົາ
[ກ]ປາດຖະໜາໃຫ້ກັບພີ່ນ້ອງຂອງພວກເຮົາ,
ແທ້ຈິງແລ້ວ, ແມ່ນການກັບຄືນມາສູ່ຄວາມ
ຮູ້ເລື່ອງພຣະຄຣິດ, ອັນເປັນໄປຕາມຄຳອະ
ທິຖານຂອງໄພ່ພົນຂອງພຣະເຈົ້າທັງໝົດຜູ້
ທີ່ອາໄສຢູ່ໃນແຜ່ນດິນ.
37 ແລະ ຂໍອົງພຣະເຢຊູຄຣິດເຈົ້າຈົ່ງຍິນ
ຍອມໃຫ້ຄຳອະທິຖານຂອງພວກເຂົາໄດ້
ຮັບຄຳຕອບຕາມສັດທາຂອງພວກເຂົາ;
ແລະ ຂໍໃຫ້ພຣະເຈົ້າອົງເປັນພຣະບິດາຈົ່ງ
ນຶກເຖິງພັນທະສັນຍາ ຊຶ່ງພຣະອົງໄດ້ເຮັດ
ໄວ້ກັບເຊື້ອສາຍອິດສະຣາເອນ; ແລະ ຂໍ
ໃຫ້ພຣະອົງຈົ່ງປະທານພອນໃຫ້ແກ່ພວກ
ເຂົາຕະຫລອດການ, ໂດຍທາງສັດທາໃນ
ພຣະນາມຂອງພຣະເຢຊູຄຣິດ. ອາແມນ.

# ໜັງສືອີເທີ

*ບັນທຶກຂອງຊາວຢາເຣັດທີ່ໄດ້ມາຈາກແຜ່ນຈາລຶກຊາວສີ່ແຜ່ນ ຊຶ່ງຜູ້ຄົນຂອງລິມໄຮໄດ້ພົບເຫັນໃນວັນເວລາຂອງກະສັດໂມໄຊຢາ.*

## ບົດທີ 1

*ໂມໂຣໄນຫຍໍ້ການບັນທຶກຂອງອີເທີເຂົ້າກັນ—ລຳດັບການສືບເຊື້ອສາຍຂອງອີເທີ—ພາສາຂອງຊາວຢາເຣັດບໍ່ໄດ້ສັບສົນໃນສະໄໝຂອງຫໍຄອຍເມືອງບາເບນ—ພຣະຜູ້ເປັນເຈົ້າສັນຍາວ່າຈະນຳພວກເຂົາໄປຫາແຜ່ນດິນທີ່ເລືອກໄວ້ ແລະ ເຮັດໃຫ້ພວກເຂົາເປັນປະຊາຊາດທີ່ຍິ່ງໃຫຍ່.*

1 ແລະ ບັດນີ້ຂ້າພະເຈົ້າ [ກ]ໂມໂຣໄນໃຫ້
ເລື່ອງລາວຂອງຜູ້ອາໄສຢູ່ໃນສະໄໝກ່ອນ
ຊຶ່ງໄດ້ຖືກທຳລາຍໄປແລ້ວໃນພື້ນ ແຜ່ນ

32 *ກ* 1 ນຟ 1:2;
ມຊຢ 1:4.
34 *ກ* ມຊຢ 8:13–18;
ອທ 3:23, 28;
ຄພ 17:1.
35 *ກ* 2 ນຟ 26:15.
36 *ກ* ມມ 8:24–26;
ຄພ 10:46–49.

[ອີເທີ]
**1** 1 *ກ* ຄມພ ໂມໂຣໄນ, ລູກ
ຊາຍຂອງມໍມອນ.

ດິນທາງເໜືອນີ້ ໂດຍ [ຂ]ພຣະຫັດຂອງພຣະ
ຜູ້ເປັນເຈົ້າ.
2 ແລະ ຂ້າພະເຈົ້າຈະເຮັດບັນທຶກຂອງ
ຂ້າພະເຈົ້າຈາກແຜ່ນຈາລຶກ [ກ]ຊາວສີ່ແຜ່ນ
ຊຶ່ງຜູ້ຄົນຂອງລິມໄຮໄດ້ພົບເຫັນ, ຊຶ່ງມີຊື່ວ່າ
ໜັງສືອີເທີ.
3 ແລະ ຄື ກັນ ກັບ ທີ່ ຂ້າ ພະ ເຈົ້າ ຄິດ ໄວ້
ແລ້ວວ່າ, ໃນພາກທຳອິດຂອງບັນທຶກນີ້ ມີ
ຢູ່ແລ້ວໃນບັນດາຊາວຢິວ ຊຶ່ງເວົ້າກ່ຽວກັບ
ການສ້າງໂລກ ແລະ ກ່ຽວກັບອາດາມນຳ
ອີກ ແລະ ເລື່ອງລາວນັບຕັ້ງແຕ່ເວລາຂອງ
ອາດາມຈົນມາຮອດເວລາຂອງ [ກ]ຫໍຄອຍ
ສູງໃຫຍ່ນັ້ນ, ແລະ ເລື່ອງອັນໃດກໍຕາມຊຶ່ງ
ເກີດຂຶ້ນໃນບັນດາລູກຫລານມະນຸດຈົນ
ຮອດເວລານັ້ນ—
4 ສະນັ້ນ ຂ້າພະເຈົ້າຈຶ່ງບໍ່ໄດ້ຂຽນເລື່ອງ
ເຫລົ່ານັ້ນ ຊຶ່ງໄດ້ເກີດຂຶ້ນນັບຕັ້ງແຕ່ [ກ]ເວລາ
ຂອງອາດາມຈົນມາຮອດເວລານັ້ນ; ເພາະ
ມັນມີຢູ່ແລ້ວໃນແຜ່ນຈາລຶກ; ແລະ ຜູ້ໃດ
ກໍຕາມທີ່ພົບພໍ້ແຜ່ນຈາລຶກ, ຜູ້ນັ້ນຈະມີ
ອຳນາດເພາະວ່າເຂົາຈະໄດ້ເລື່ອງລາວ
ໂດຍຄົບຖ້ວນ.
5 ແຕ່ຈົ່ງເບິ່ງ, ຂ້າພະເຈົ້າບໍ່ໄດ້ໃຫ້ເລື່ອງ
ລາວໂດຍຄົບຖ້ວນ, ແຕ່ວ່າຂ້າພະເຈົ້າໄດ້
ໃຫ້ໄວ້ພຽງສ່ວນໜຶ່ງຂອງເລື່ອງລາວນັບຕັ້ງ
ແຕ່ຫໍຄອຍຈົນກະທັ້ງພວກເຂົາເຫລົ່ານັ້ນ
ຖືກທຳລາຍໝົດ.
6 ແ ລະ ຂ້າ ພະ ເຈົ້າ ໃຫ້ ເລື່ອງ ລາວ ໄວ້
ຕາມນີ້. ຜູ້ທີ່ຂຽນບັນທຶກນີ້ມີຊື່ວ່າ [ກ]ອີເທີ,
ແລະ ລາວເປັນຜູ້ສືບຕະກຸນຂອງໂຄຣິ
ອານທໍ.
7 ໂຄຣິອານທໍເປັນລູກຊາຍຂອງໂມຣັນ.
8 ແລະ ໂມຣັນເປັນລູກຊາຍຂອງອີເທັມ.
9 ແລະ ອີເທັມເປັນລູກຊາຍຂອງເອຫາ.
10 ແລະ ເອຫາເປັນລູກຊາຍຂອງເຊດ.
11 ແລະ ເຊດເປັນລູກຊາຍຂອງຊິບລັນ.
12 ແລະ ຊິບລັນເປັນລູກຊາຍຂອງຄອມ.
13 ແລະ ຄອມເປັນລູກຊາຍຂອງໂຄຣິ
ອານທຳ.
14 ແລະ ໂຄຣິອານທຳເປັນລູກຊາຍຂອງ
ອາມນິແກດາ.
15 ແລະ ອາມນິແກດາເປັນລູກຊາຍຂອງ
ອາໂຣນ.
16 ແລະ ອາໂຣນເປັນຜູ້ສືບຕະກຸນຂອງ
ເຫັດ, ຜູ້ເປັນລູກຊາຍຂອງຮີອາທຳ.
17 ແລະ ຮີອາທຳເປັນລູກຊາຍຂອງລິບ.
18 ແລະ ລິບເປັນລູກຊາຍຂອງກີເຊ.
19 ແລະ ກີເຊເປັນລູກຊາຍຂອງໂຄຣຳ.
20 ແລະ ໂຄຣຳເປັນລູກຊາຍຂອງເລວີ.
21 ແລະ ເລວີເປັນລູກຊາຍຂອງຄິມ.
22 ແລະ ຄິມເປັນລູກຊາຍຂອງໂມຣິ
ອານທັນ.
23 ແລະ ໂມຣິອານທັນເປັນຜູ້ສືບຕະກຸນ
ຂອງຣິບລາຄິດ.
24 ແລະ ຣິບລາຄິດ ເປັນ ລູກ ຊາຍ ຂອງ
ເຊັດ.
25 ແລະ ເຊັດເປັນລູກຊາຍຂອງເຫັດ.
26 ແລະ ເຫັດເປັນລູກຊາຍຂອງຄອມ.
27 ແລະ ຄອມເປັນລູກຊາຍຂອງໂຄຣິ
ອານທຳ.
28 ແລະ ໂຄຣິອານທຳເປັນລູກຊາຍຂອງ
ອີເມີ.
29 ແລະ ອີເມີເປັນລູກຊາຍຂອງໂອເມ.
30 ແລະ ໂອເມເປັນລູກຊາຍຂອງຊູນ.

1 *ຂ* ມມ 5:23;
ຄພ 87:6–7.
2 *ກ* ແອວ 37:21;
ອທ 15:33.
3 *ກ* ອມນ 1:22;
ມຊຢ 28:17;
ຮລມ 6:28.
4 *ກ* ອສ ຄວບໄລຍະດຽວກັບ
ປະຖົມມະການ 1–10.
6 *ກ* ອທ 12:2; 15:34.

31 ແລະ ຊູນເປັນລູກຊາຍຂອງຄີບ.
32 ແລະ ຄີບ ເປັນ ລູກ ຊາຍ ຂອງ ໂອ ໄຮ
ຮາ, ຜູ້ເປັນລູກຊາຍຂອງຢາເຣັດ;
33 [ກ]ຢາເຣັດຜູ້ນີ້ແຫລະຄືຜູ້ທີ່ມາຈາກຫໍ
ສູງໃຫຍ່ພ້ອມດ້ວຍນ້ອງຊາຍ ແລະ ຄອບ
ຄົວຂອງພວກເຂົາ, ພ້ອມທັງຜູ້ອື່ນ ແລະ
ຄອບຄົວຂອງພວກເຂົາ, ໃນວັນເວລາທີ່
ພຣະຜູ້ເປັນເຈົ້າເຮັດໃຫ້ພາສາຂອງມະນຸດ
[ຂ]ສັບສົນກັນ, ແລະ ສາບານໃນພຣະພິໂລດ
ຂອງພຣະອົງວ່າ ຜູ້ຄົນທັງຫລາຍຈະກະຈັດ
ກະຈາຍໄປຕາມ [ຄ]ພື້ນແຜ່ນດິນໂລກ; ແລະ
ຕາມພຣະຄຳຂອງພຣະຜູ້ເປັນເຈົ້າມະນຸດ
ຈຶ່ງກະຈັດກະຈາຍໄປ.
34 ແລະ [ກ]ນ້ອງຊາຍຂອງຢາເຣັດ ໂດຍທີ່
ເປັນຄົນຮ່າງໃຫຍ່ສູງ ແລະ ມີກຳລັງຫລາຍ,
ແລະ ໂດຍທີ່ເປັນຜູ້ໂປດປານທີ່ສຸດຂອງ
ພຣະຜູ້ເປັນເຈົ້າ, ຢາເຣັດ ຜູ້ເປັນອ້າຍຈຶ່ງ
ເວົ້າກັບລາວວ່າ: ຈົ່ງຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າເຖີດ, ເພື່ອພຣະອົງຈະບໍ່ເຮັດໃຫ້ພາສາ
ຂອງພວກເຮົາສັບສົນຈົນວ່າພວກເຮົາເວົ້າ
ບໍ່ເຂົ້າໃຈກັນ.
35 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງຢາເຣັດໄດ້ຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າ, ແລະ ພຣະຜູ້ເປັນເຈົ້າມີຄວາມເມດ
ຕາສົງສານຕໍ່ຢາເຣັດ; ສະນັ້ນ ພຣະອົງຈຶ່ງ
ບໍ່ໄດ້ເຮັດໃຫ້ພາສາຂອງຢາເຣັດສັບສົນ;
ແລະ ຢາເຣັດກັບນ້ອງຊາຍຂອງລາວກໍບໍ່
ໄດ້ສັບສົນ.
36 ຈາກ ນັ້ນ ຢາເຣັດ ໄດ້ ເວົ້າ ກັບ ນ້ອງ
ຊາຍຂອງລາວວ່າ: ຈົ່ງຮ້ອງທູນຂໍພຣະຜູ້
ເປັນເຈົ້າອີກ, ເພື່ອບາງທີພຣະອົງຈະຫັນ
ເອົາພຣະພິໂລດຂອງພຣະອົງໄປຈາກໝູ່
ເພື່ອນຂອງພວກເຮົາ, ເພື່ອພຣະອົງຈະບໍ່
ເຮັດໃຫ້ພາສາຂອງພວກເຂົາສັບສົນ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງຢາເຣັດໄດ້ຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າ, ແລະ ພຣະອົງມີຄວາມເມດຕາປານີຕໍ່
ໝູ່ເພື່ອນຂອງພວກເຂົາ, ພ້ອມທັງຄອບຄົວ
ຂອງພວກເຂົານຳອີກ, ຄືພາສາຂອງພວກ
ເຂົາບໍ່ໄດ້ສັບສົນ.
38 ແລະ ເຫດການ ໄດ້ບັງເກີດ ຂຶ້ນ ຄື
ຢາເຣັດໄດ້ເວົ້າກັບນ້ອງຊາຍຂອງລາວອີກ,
ມີຄວາມວ່າ: ຈົ່ງໄປທູນຖາມພຣະຜູ້ເປັນ
ເຈົ້າວ່າ ພຣະອົງຈະຂັບໄລ່ພວກເຮົາອອກ
ຈາກແຜ່ນດິນບໍ່ ແລະ ຖ້າຫາກພຣະອົງຈະ
ຂັບໄລ່ພວກເຮົາອອກຈາກແຜ່ນດິນໄປ ຈົ່ງ
ຮ້ອງທູນຕໍ່ພຣະອົງວ່າ ພວກເຮົາຈະໄປຫາ
ບ່ອນໃດ? ແລະ ເພື່ອບາງທີພຣະຜູ້ເປັນ
ເຈົ້າຈະໄດ້ນຳພາພວກເຮົາໄປຫາແຜ່ນດິນ
ທີ່ [ກ]ປະເສີດເລີດລ້ຳກວ່າແຜ່ນດິນອື່ນໃດ
ໃນໂລກນີ້? ແລະ ຖ້າຫາກມັນເປັນເຊັ່ນນັ້ນ
ກໍຂໍໃຫ້ພວກເຮົາຊື່ສັດຕໍ່ພຣະຜູ້ເປັນເຈົ້າ
ເພື່ອຈະໄດ້ຮັບແຜ່ນດິນນັ້ນມາເປັນມູນມໍ
ລະດົກຂອງພວກເຮົາ.
39 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງຢາເຣັດກໍໄດ້ຮ້ອງທູນຕໍ່ພຣະຜູ້
ເປັນເຈົ້າຕາມທີ່ໄດ້ເວົ້າໄວ້ດ້ວຍປາກຂອງ
ຢາເຣັດ.
40 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະ ຜູ້ ເປັນ ເຈົ້າ ໄດ້ ຍິນ ນ້ອງ ຊາຍ ຂອງ
ຢາເຣັດ, ແລະ ມີຄວາມເມດຕາປານີຕໍ່
ລາວ, ແລະ ໄດ້ກ່າວກັບລາວວ່າ:
41 ຈົ່ງໄປເຕົ້າໂຮມຝູງສັດລ້ຽງຂອງເຈົ້າ
ທັງໂຕຜູ້ ແລະ ໂຕແມ່ທຸກຊະນິດ, ແລະ
ເມັດພືດເຄື່ອງປູກຂອງຝັງ ທຸກໆຊະນິດນຳ
ອີກ; ພ້ອມທັງ [ກ]ຄອບຄົວຂອງເຈົ້າ; ແລະ

33 *ກ* ຄມພ ຢາເຣັດ.
*ຂ* ປຖກ 11:6–9.
*ຄ* ມຊຢ 28:17.
34 *ກ* ຄມພ ຢາເຣັດ, ນ້ອງ ຊາຍຂອງ.
38 *ກ* ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
41 *ກ* ອທ 6:20.

ຢາເຣັດ ອ້າຍ ຂອງ ເຈົ້າ ພ້ອມ ທັງ ຄອບ ຄົວ
ຂອງລາວ ອີກ; ແລະ [ຂ]ໝູ່ເພື່ອນຂອງເຈົ້າ
ພ້ອມທັງຄອບຄົວຂອງພວກເຂົາ; ແລະ ໝູ່
ເພື່ອນຂອງຢາເຣັດພ້ອມທັງຄອບຄົວຂອງ
ພວກເຂົາ.
42 ແລະ ເວລາເຈົ້າເຮັດຕາມນີ້ແລ້ວ ເຈົ້າ
ຈົ່ງ [ກ]ນຳໜ້າພວກເຂົາລົງໄປຫາຮ່ອມພູທາງ
ເໜືອ. ແລະ ເຮົາຈະພົບກັບເຈົ້າຢູ່ບ່ອນນັ້ນ,
ແລະ ເຮົາຈະ [ຂ]ນຳທາງເຈົ້າໄປຫາແຜ່ນດິນ
ອັນ [ຄ]ປະເສີດເລີດລ້ຳກວ່າແຜ່ນດິນທັງໝົດ
ໃນໂລກ.
43 ແລະ ບ່ອນ ນັ້ນ ເຮົາ ຈະ ໃຫ້ ພອນ
ແກ່ ເຈົ້າ ແລະ ລູກຫລານຂອງເຈົ້າ, ແລະ
ສະຖາ ປະນາປະຊາຊາດທີ່ ຍິ່ງ ໃຫຍ່ ນັ້ນ
ໄວ້ໃຫ້ເຮົາຈາກລູກຫລານຂອງເຈົ້າ, ແລະ
ຈາກລູກຫລານຂອງອ້າຍຂອງເຈົ້າ, ແລະ
ຜູ້ທີ່ຈະໄປພ້ອມກັບເຈົ້າ, ແລະ ຈະບໍ່ມີປະ
ຊາຊາດໃດໆໃນພື້ນແຜ່ນດິນໂລກນີ້ທີ່ຈະ
ຍິ່ງໃຫຍ່ກວ່າປະຊາຊາດ ຊຶ່ງເຮົາຈະສະຖາ
ປະນາໃຫ້ຕົວເຮົາເອງ, ຈາກລູກຫລານ
ຂອງເຈົ້າ. ແລະ ເຮົາຈະໃຫ້ເຈົ້າດັ່ງນີ້ຍ້ອນ
ວ່າເຈົ້າໄດ້ຂໍເຮົາເປັນເວລາອັນຍາວນານ.

## ບົດທີ 2

*ຊາວ ຢາເຣັດ ຕຽມ ພ້ອມ ເພື່ອການເດີນທາງໄປຫາແຜ່ນດິນແຫ່ງຄຳສັນຍາ—ມັນເປັນແຜ່ນດິນບ່ອນທີ່ມະນຸດຈະຕ້ອງຮັບໃຊ້ພຣະຄຣິດ ຖ້າບໍ່ດັ່ງນັ້ນຈະຖືກກວາດອອກໄປ—ພຣະຜູ້ເປັນເຈົ້າສົນທະນາກັບນ້ອງຊາຍຂອງຢາເຣັດເປັນເວລາສາມຊົ່ວໂມງ—ຊາວຢາເຣັດສ້າງເຮືອຈຳນວນໜຶ່ງ—ພຣະຜູ້ເປັນເຈົ້າຖາມນ້ອງຊາຍຂອງຢາເຣັດວ່າເຮັດແນວໃດເຮືອນັ້ນຈຶ່ງຈະມີແສງສະຫວ່າງ.*

1 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຢາເຣັດ ແລະ ນ້ອງຊາຍຂອງລາວພ້ອມ
ທັງຄອບຄົວຂອງພວກເຂົາ, ພ້ອມດ້ວຍ
ໝູ່ ເພື່ອນ ຂອງຢາເຣັດ ແລະ ນ້ອງ ຊາຍ
ຂອງ ລາວ ພ້ອມ ທັງຄອບຄົວຂອງພວກ
ເຂົາເຫລົ່ານັ້ນ, ລົງໄປຫາຮ່ອມພູຊຶ່ງຢູ່ທາງ
ເໜືອ, (ແລະ ຮ່ອມພູນັ້ນມີຊື່ວ່າ [ກ]ນິມໂຣດ,
ຊຶ່ງເອີ້ນຕາມຊື່ນາຍພານທີ່ມີຊື່ສຽງຜູ້ໜຶ່ງ)
ພ້ອມທັງຝູງສັດລ້ຽງຂອງພວກເຂົາ ຊຶ່ງ
ພວກເຂົາໄດ້ເຕົ້າໂຮມໄວ້, ທັງໂຕຜູ້ ແລະ
ໂຕແມ່ທຸກຊະນິດ.
2 ແລະ ພວກເຂົາໄດ້ຫ້າງແຮ້ວຈັບນົກໃນ
ອາກາດ; ແລະ ພວກເຂົາໄດ້ຕຽມພາຊະນະ
ຊຶ່ງໃນນັ້ນພວກເຂົາຈະໄດ້ເອົາປາຈາກນ້ຳ
ໄປກັບພວກເຂົາ.
3 ແລະ ພວກເຂົາໄດ້ເອົາເດເຊເຣັດໄປ
ນຳ ຊຶ່ງ ແປວ່າ ໂຕເຜິ້ງ, ແລະ ພວກເຂົາ
ໄດ້ເອົາຝູງເຜິ້ງໄປນຳດັ່ງນັ້ນ; ແລະ ສິ່ງທີ່
ມີຢູ່ໃນພື້ນແຜ່ນດິນນາໆຊະນິດ, ເມັດພືດ
ເຄື່ອງປູກຂອງຝັງທຸກຊະນິດ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ພວກເຂົາລົງມາຮອດຮ່ອມພູນິມໂຣດແລ້ວ
ພຣະຜູ້ເປັນເຈົ້າໄດ້ສະເດັດລົງມາ ແລະ
ກ່າວກັບນ້ອງຊາຍຂອງຢາເຣັດ; ແລະ
ພຣະອົງໄດ້ປະທັບຢູ່ໃນ [ກ]ກ້ອນເມກ, ແລະ
ນ້ອງຊາຍຂອງຢາເຣັດກໍບໍ່ໄດ້ເຫັນພຣະອົງ
ເລີຍ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າໄດ້ບັນຊາພວກເຂົາໃຫ້ເຂົ້າໄປ
ໃນ ຖິ່ນ ແຫ້ງແລ້ງກັນດານ, ແທ້ຈິງ ແລ້ວ,

41 *ຂ* ອທ 6:16.
42 *ກ* 1 ນຟ 2:1–2; ອຣຣ 2:3.
*ຂ* ຄພ 84:88.
*ຄ* 1 ນຟ 13:30.
**2** 1 *ກ* ປຖກ 10:8.
4 *ກ* ຈບຊ 11:25; ຄພ 34:7–9; ຈສ—ປ 1:68.

ໄປຫາສ່ວນບ່ອນທີ່ບໍ່ມີຜູ້ໃດໄປເຖິງ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າ
ໄດ້ສະເດັດອອກທາງໜ້າພວກເຂົາ, ແລະ
ໄດ້ກ່າວກັບພວກເຂົາຂະນະທີ່ພຣະອົງປະ
ທັບຢູ່ໃນ ກກ້ອນເມກ, ແລະ ຊີ້ທາງທີ່ພວກ
ເຂົາຄວນຈະໄປຫາ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ເດີນທາງເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ, ແລະ ໄດ້ສ້າງເຮືອບັນທຸກ ຊຶ່ງ
ດ້ວຍເຮືອນັ້ນພວກເຂົາຈະໄດ້ໃຊ້ຂ້າມແມ່
ນ້ຳຫລາຍສາຍ ແລະ ໄດ້ຮັບການຊີ້ທາງ
ຕະຫລອດເວລາ ໂດຍພຣະຫັດຂອງພຣະ
ຜູ້ເປັນເຈົ້າ.
7 ແລະ ພຣະຜູ້ເປັນເຈົ້າບໍ່ຍອມໃຫ້ພວກ
ເຂົາຢຸດພັກໃນຖິ່ນແຫ້ງແລ້ງກັນດານເລີຍ
ທະເລໄປ, ແຕ່ພຣະອົງຢາກໃຫ້ພວກເຂົາ
ເລີຍໄປຈົນເຖິງ ກແຜ່ນດິນແຫ່ງຄຳສັນຍາ
ຊຶ່ງປະເສີດເລີດລ້ຳກວ່າແຜ່ນດິນອື່ນໃດທັງ
ສິ້ນ ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຮັກສາໄວ້ໃຫ້
ຄົນຊອບທຳ.
8 ແລະ ພຣະ ອົງ ໄດ້ ສາບານ ກັບ ນ້ອງ
ຊາຍຂອງຢາເຣັດດ້ວຍພຣະພິໂລດວ່າ, ຜູ້
ໃດກໍຕາມທີ່ຈະເປັນເຈົ້າຂອງແຜ່ນດິນແຫ່ງ
ຄຳສັນຍານີ້ ນັບແຕ່ເວລານັ້ນໄປຕະຫລອດ
ການ, ຜູ້ນັ້ນຈະຕ້ອງ ກຮັບໃຊ້ພຣະອົງ ຜູ້
ເປັນພຣະເຈົ້າອົງທ່ຽງແທ້ ແລະ ອົງດຽວ
ເທົ່ານັ້ນ, ຖ້າບໍ່ດັ່ງນັ້ນ ພວກເຂົາຈະຖືກ
ຂກວາດອອກໄປເມື່ອຄວາມສົມບູນແຫ່ງ
ພຣະພິໂລດຂອງພຣະອົງມາຫາພວກເຂົາ.
9 ແລະ ບັດນີ້, ພວກເຮົາເຫັນໄດ້ເຖິງ
ພຣະດຳລັດຂອງພຣະເຈົ້າກ່ຽວກັບແຜ່ນ
ດິນນີ້, ຄືເປັນແຜ່ນດິນແຫ່ງຄຳສັນຍາ;
ແລະ ຊາດໃດກໍຕາມທີ່ເປັນເຈົ້າຂອງ ຊາດ
ນັ້ນຈະຕ້ອງຮັບໃຊ້ພຣະເຈົ້າ, ຖ້າບໍ່ດັ່ງນັ້ນ
ເຂົາຈະຖືກກວາດອອກໄປເວລາຄວາມສົມ
ບູນແຫ່ງພຣະພິໂລດຂອງພຣະອົງມາຫາ
ພວກເຂົາ. ແລະ ຄວາມສົມບູນແຫ່ງພຣະ
ພິໂລດຂອງພຣະອົງຈະມາຫາພວກເຂົາໃນ
ເວລາພວກເຂົາສຸກຢູ່ໃນຄວາມຊົ່ວຮ້າຍ.
10 ເພາະຈົ່ງເບິ່ງ, ນີ້ເປັນແຜ່ນດິນທີ່ປະ
ເສີດເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ;
ດັ່ງນັ້ນຜູ້ທີ່ເປັນເຈົ້າຂອງຈະຕ້ອງຮັບໃຊ້
ພຣະເຈົ້າ; ຖ້າບໍ່ດັ່ງນັ້ນ ຈະຖືກກວາດອອກ
ໄປ ເພາະວ່າມັນເປັນພຣະດຳລັດອັນເປັນ
ນິດຂອງພຣະເຈົ້າ. ແລະ ມັນຈະບໍ່ເກີດ
ຂຶ້ນຈົນກວ່າຈະຮອດ ກຄວາມສົມບູນຂອງ
ຄວາມຊົ່ວຮ້າຍໃນບັນດາລູກຫລານຂອງ
ແຜ່ນດິນ ທີ່ພວກເຂົາຈະຖືກ ຂກວາດອອກ
ໄປ.
11 ແລະ ມັນຈະມາຫາທ່ານ, ໂອ້ ທ່ານ
ກຄົນຕ່າງຊາດ, ເພື່ອທ່ານຈະໄດ້ຮູ້ຈັກພຣະ
ດຳລັດຂອງພຣະເຈົ້າ—ເພື່ອທ່ານຈະກັບ
ໃຈ, ແລະ ບໍ່ຢູ່ໃນຄວາມຊົ່ວຮ້າຍຂອງທ່ານ
ຕໍ່ໄປຈົນກວ່າຄວາມສົມບູນນັ້ນມາຮອດ,
ເພື່ອທ່ານຈະບໍ່ໄດ້ນຳເອົາຄວາມສົມບູນ
ແຫ່ງພຣະພິໂລດຂອງພຣະເຈົ້າລົງມາຫາ
ທ່ານຄືກັນກັບຜູ້ອາໄສຂອງແຜ່ນດິນເຄີຍ
ເຮັດມາແລ້ວ.
12 ຈົ່ງເບິ່ງ, ນີ້ເປັນແຜ່ນດິນທີ່ປະເສີດ
ເລີດລ້ຳ, ແລະ ປະຊາດຊາດໃດກໍຕາມທີ່
ຈະມາເປັນເຈົ້າຂອງມັນ ຈະເປັນ ກອິດສະ
ລະຈາກຄວາມເປັນທາດ, ແລະ ຈາກການ
ເປັນຊະເລີຍ ແລະ ຈາກປະຊາຊາດອື່ນ
ທັງໝົດພາຍໃຕ້ສະຫວັນຊັ້ນຟ້ານີ້, ຖ້າ

5 ກ ອພຍ 13:21–22.
7 ກ 1 ນຟ 4:14.
ຄມພ ແຜ່ນດິນ
ແຫ່ງຄຳສັນຍາ.
8 ກ ອທ 13:2.
ຂ ຈຣ 1:3, 10;
ແອວ 37:28;
ອທ 9:20.
10 ກ 2 ນຟ 28:16.
ຂ 1 ນຟ 17:37–38.
11 ກ 2 ນຟ 28:32.
12 ກ ຄມພ ເສລີພາບ.

ຫາກ ເຂົາ ພຽງ ແຕ່ ຈະ [ຂ]ຮັບ ໃຊ້ ພຣະ ເຈົ້າ
ຂອງແຜ່ນດິນ, ຄືພຣະເຢຊູຄຣິດ, ຜູ້ຊຶ່ງໄດ້
ສະແດງ ໃຫ້ ປະຈັກມາແລ້ວ ໂດຍ ເລື່ອງ ທີ່
ພວກເຮົາຂຽນໄວ້.
13 ແລະ ບັດນີ້ຂ້າພະເຈົ້າເລີ່ມເຮັດບັນ
ທຶກຂອງຂ້າພະເຈົ້າຕໍ່ໄປ; ເພາະ ຈົ່ງ ເບິ່ງ,
ເຫດການ ໄດ້ບັງ ເກີດ ຂຶ້ນຄື ພຣະ ຜູ້ ເປັນ
ເຈົ້າໄດ້ ນຳ ເອົາ ຢາເຣັດ ແລະ ນ້ອງຊາຍ
ຂອງ ລາວ ມາ ຈົນ ຮອດທະເລ ໃຫຍ່ ແບ່ງ
ແຍກ ແຜ່ນ ດິນ. ແລະ ເມື່ອພວກເຂົາມາ
ຮອດທະເລແລ້ວ ພວກເຂົາໄດ້ຕັ້ງຜ້າເຕັ້ນ
ຂຶ້ນ; ແລະ ພວກເຂົາເອີ້ນບ່ອນນັ້ນວ່າ ໂມ
ຣິອານຄູເມີ; ແລະ ພວກເຂົາໄດ້ອາໄສຢູ່ໃນ
ຜ້າເຕັ້ນນັ້ນຢູ່ແຄມຝັ່ງທະເລແຫ່ງນັ້ນເປັນ
ເວລາສີ່ປີ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ທ້າຍປີທີສີ່ ພຣະຜູ້ເປັນເຈົ້າໄດ້ສະເດັດລົງ
ມາຫານ້ອງຊາຍຂອງຢາເຣັດອີກ, ແລະ ປະ
ທັບຢູ່ໃນກ້ອນເມກ ແລະ ໄດ້ກ່າວກັບລາວ.
ແລະ ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວກັບ ນ້ອງ
ຊາຍຂອງຢາເຣັດເປັນເວລາສາມຊົ່ວໂມງ,
ແລະ [ກ]ຕີສອນລາວ ຍ້ອນວ່າລາວບໍ່ໄດ້ຈື່ຈຳ
ທີ່ຈະ [ຂ]ເອີ້ນຫາພຣະນາມຂອງພຣະຜູ້ເປັນ
ເຈົ້າເລີຍ.
15 ແລະ ນ້ອງ ຊາຍ ຂອງ ຢາເຣັດ ໄດ້ ກັບ
ໃຈ ຈາກ ຄວາມຊົ່ວທີ່ລາວ ໄດ້ ເຮັດ ໄປນັ້ນ,
ແລະ ໄດ້ ເອີ້ນ ຫາ ພຣະ ນາມ ຂອງພຣະ ຜູ້
ເປັນ ເຈົ້າ ເພື່ອ ພີ່ ນ້ອງ ຂອງ ລາວຜູ້ທີ່ຢູ່ນຳ
ລາວ. ແລະ ພຣະຜູ້ເປັນເຈົ້າໄດ້ບອກລາວ
ວ່າ: ເຮົາຈະຍົກໂທດໃຫ້ເຈົ້າ ແລະ ພີ່ນ້ອງ
ຂອງເຈົ້າກ່ຽວກັບບາບຂອງພວກເຂົາ; ແຕ່
ວ່າເຈົ້າຢ່າໄດ້ເຮັດບາບອີກຕໍ່ໄປ, ແລະ ເຈົ້າ
ຈົ່ງຈຳໄວ້ວ່າ [ກ]ວິນຍານຂອງເຮົາຈະບໍ່ [ຂ]ພະ
ຍາຍາມຢູ່ກັບມະນຸດສະເໝີໄປ; ດັ່ງນັ້ນ,
ຖ້າຫາກເຈົ້າເຮັດບາບອີກຕໍ່ໄປຈົນສຸກເຕັມ
ທີ່ແລ້ວ, ເຈົ້າຈະຖືກຕັດອອກຈາກທີ່ປະທັບ
ຂອງພຣະຜູ້ເປັນເຈົ້າ. ແລະ ນີ້ຄືຄວາມນຶກ
ຄິດຂອງເຮົາກ່ຽວກັບແຜ່ນດິນ ຊຶ່ງເຮົາຈະ
ໃຫ້ແກ່ເຈົ້າເພື່ອເປັນມູນມໍລະດົກຂອງເຈົ້າ;
ເພາະວ່າມັນຈະເປັນແຜ່ນດິນທີ່ [ຄ]ປະເສີດ
ເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ.
16 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ຈົ່ງ
ລົງມືເຮັດວຽກ, ແລະ ສ້າງເຮືອຕາມແບບ
ຊຶ່ງເຮົາເຮັດໄວ້ກ່ອນນັ້ນ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງຢາເຣັດໄດ້
ລົງມືສ້າງເຮືອພ້ອມທັງພີ່ນ້ອງຂອງລາວ,
ແລະ ໄດ້ສ້າງເຮືອຕາມແບບທີ່ພວກເຂົາໄດ້
ເຮັດມາແລ້ວຕາມ [ກ]ຄຳແນະນຳຂອງພຣະ
ຜູ້ເປັນເຈົ້າ, ແລະ ມັນນ້ອຍ ແລະ ເບົາຢູ່
ເທິງໜ້ານ້ຳຄືກັນກັບຄວາມເບົາຂອງນົກທີ່
ຢູ່ເທິງໜ້ານ້ຳ.
17 ແລະ ເຮືອເຫລົ່ານັ້ນຖືກສ້າງຂຶ້ນຕາມ
ວິທີອັນ [ກ]ແໜ້ນໜາທີ່ສຸດ, ຈົນວ່າມັນສາ
ມາດບັນຈຸນ້ຳໄດ້ຄືກັນກັບຊາມ; ແລະ ທ້ອງ
ຂອງ ມັນ ແໜ້ນ ໜາ ຄື ກັນກັບ ຊາມ; ແລະ
ຂ້າງຂອງມັນແໜ້ນໜາຄືກັນກັບຊາມ, ແລະ
ທ້າຍທັງສອງເບື້ອງສ້ອຍແຫລມ; ແລະ ທາງ
ເທິງຂອງມັນແໜ້ນໜາຄືກັນກັບຊາມ; ແລະ
ຄວາມຍາວຂອງມັນຄືກັນກັບຄວາມຍາວ
ຂອງຕົ້ນໄມ້; ແລະ ປະຕູຂອງມັນ, ເວລາປິດ
ແລ້ວ, ມັນແໜ້ນໜາຄືກັນກັບຊາມ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງຢາເຣັດໄດ້ທູນຕໍ່ພຣະຜູ້ເປັນເຈົ້າ,
ມີຄວາມວ່າ: ໂອ້ ພຣະຜູ້ເປັນເຈົ້າ, ຂ້ານ້ອຍ

12 *ຂ* ອຊຢ 60:12.
14 *ກ* ຄມພ ຕີສອນ, ການຕີສອນ.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
15 *ກ* ອທ 15:19.
*ຂ* ປຖກ 6:3; 2 ນຟ 26:11; ມມ 5:16.
*ຄ* ອທ 9:20.
16 *ກ* 1 ນຟ 17:50–51.
17 *ກ* ອທ 6:7.

ໄດ້ເຮັດວຽກຊຶ່ງພຣະອົງບັນຊາຂ້ານ້ອຍ
ແລ້ວ, ແລະ ຂ້ານ້ອຍໄດ້ເຮັດເຮືອຕາມທີ່
ພຣະອົງແນະນຳໃຫ້ຂ້ານ້ອຍເຮັດ.
19 ແລະ ຈົ່ງທອດພຣະເນດເບິ່ງ, ໂອ້
ພຣະຜູ້ເປັນເຈົ້າ, ມັນບໍ່ມີແສງສະຫວ່າງ
ຢູ່ໃນເຮືອເລີຍ? ແລະ ຂ້ານ້ອຍຈະບັງຄັບ
ເຮືອໄປທາງໃດ? ພວກຂ້ານ້ອຍຈະຕ້ອງ
ຕາຍເພາະວ່າພວກຂ້ານ້ອຍຫາຍໃຈບໍ່ໄດ້
ໃນເຮືອ, ນອກຈາກດ້ວຍອາກາດທີ່ຢູ່ໃນ
ນັ້ນ; ສະນັ້ນພວກຂ້ານ້ອຍຈະຕ້ອງຕາຍ.
20 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ນ້ອງຊາຍຂອງຢາເຣັດວ່າ: ຈົ່ງເບິ່ງ, ໃຫ້
ເຈົ້າເຈາະຮູຂ້າງເທິງຮູໜຶ່ງ ແລະ ເຈາະທ້ອງ
ເຮືອອີກຮູໜຶ່ງ. ແລະ ເມື່ອເຈົ້າຈະຕ້ອງທົນ
ທຸກເພາະຂາດອາກາດ ໃຫ້ເຈົ້າເປີດຮູ ແລະ
ຮັບອາກາດ. ແລະ ຖ້າຫາກເປັນໄປວ່ານ້ຳ
ໄຫລເຂົ້າມາຫາເຈົ້າ, ຈົ່ງເບິ່ງ, ໃຫ້ເຈົ້າປິດຮູ
ເພື່ອເຈົ້າຈະບໍ່ຕາຍດ້ວຍນ້ຳຖ້ວມ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງຢາເຣັດໄດ້ເຮັດຕາມນັ້ນ, ຕາມທີ່
ພຣະຜູ້ເປັນເຈົ້າບັນຊາໃຫ້ເຮັດ.
22 ແລະ ລາວໄດ້ຮ້ອງທູນຕໍ່ພຣະຜູ້ເປັນ
ເຈົ້າອີກມີຄວາມວ່າ: ໂອ້ ພຣະຜູ້ເປັນເຈົ້າ,
ຂໍຈົ່ງໂປດທອດພຣະເນດເຖີດ, ຂ້ານ້ອຍ
ໄດ້ເຮັດຕາມທີ່ພຣະອົງໄດ້ບັນຊາຂ້ານ້ອຍ
ແລ້ວ, ແລະ ຂ້ານ້ອຍໄດ້ຕຽມພາຊະນະໄວ້
ສຳລັບຜູ້ຄົນຂອງຂ້ານ້ອຍແລ້ວ, ແລະ ຈົ່ງ
ທອດພຣະເນດເຖີດ, ມັນບໍ່ມີແສງສະຫວ່າງ
ເລີຍຢູ່ໃນນັ້ນ. ຈົ່ງທອດພຣະເນດເຖີດ,
ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງຈະປ່ອຍໃຫ້
ພວກຂ້ານ້ອຍຂ້າມນ້ຳອັນກວ້າງໃຫຍ່ດ້ວຍ
ຄວາມມືດບໍ?
23 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ນ້ອງຊາຍຂອງຢາເຣັດວ່າ: ເຈົ້າຢາກໃຫ້
ເຮົາເຮັດສິ່ງໃດໃຫ້ເຈົ້າ ເພື່ອເຈົ້າຈະໄດ້ມີ
ແສງສະຫວ່າງຢູ່ໃນພາຊະນະຂອງເຈົ້າ?
ເພາະຈົ່ງເບິ່ງ, ເຈົ້າບໍ່ສາມາດມີປ່ອງຢ້ຽມ
ເພາະວ່າມັນຈະແຕກອອກເປັນປ່ຽງໆ, ທັງ
ເຈົ້າບໍ່ສາມາດເອົາໄຟໄປກັບເຈົ້າ ເພາະວ່າ
ເຈົ້າຈະບໍ່ໄດ້ໄປດ້ວຍແສງໄຟ.
24 ເພາະຈົ່ງເບິ່ງ, ເຈົ້າຈະເປັນຄືກັບປາ
ວານຢູ່ໃນກາງທະເລ; ເພາະວ່າຄື້ນທະເລ
ຈະມາກະທົບຖ້ວມເຈົ້າ. ເຖິງຢ່າງໃດກໍ
ຕາມ, ເຈົ້າຈະຂຶ້ນມາອີກຈາກຄວາມເລິກ
ຂອງທະເລ; ເພາະວ່າ [ກ]ລົມນັ້ນພັດອອກ
ຈາກປາກຂອງເຮົາ, ແລະ ເຮົາຈະສົ່ງ [ຂ]ຝົນ
ແລະ ນ້ຳຖ້ວມໄປນຳອີກ.
25 ແລະ ຈົ່ງເບິ່ງ, ເຮົາຕຽມເຈົ້າໄວ້ຕໍ່ສູ້ສິ່ງ
ເຫລົ່ານີ້; ເພາະວ່າເຈົ້າຈະຂ້າມຄວາມເລິກ
ອັນກວ້າງໃຫຍ່ນີ້ໄປບໍ່ໄດ້ນອກຈາກວ່າເຮົາ
ຈະຕຽມເຈົ້າຕໍ່ສູ້ກັບຄື້ນທະເລ ແລະ ລົມທີ່
ພັດມາ ແລະ ນ້ຳຖ້ວມທີ່ຈະມາຫາເຈົ້າເສຍ
ກ່ອນ. ສະນັ້ນ ເຈົ້າຢາກໃຫ້ເຮົາຕຽມສິ່ງໃດ
ໃຫ້ເຈົ້າ ເພື່ອເຈົ້າຈະໄດ້ມີແສງສະຫວ່າງ
ເວລາເຈົ້າຖືກກືນເຂົ້າໄປໃນຄວາມເລິກທີ່
ສຸດຂອງທະເລ?

## ບົດທີ 3

*ນ້ອງຊາຍຂອງຢາເຣັດເຫັນນິ້ວພຣະຫັດຂອງພຣະຜູ້ເປັນເຈົ້າໃນຂະນະທີ່ພຣະອົງແຕະຕ້ອງຫີນສິບຫົກກ້ອນນັ້ນ—ພຣະຄຣິດໄດ້ສະແດງຮ່າງກາຍທາງວິນຍານແກ່ນ້ອງຊາຍຂອງຢາເຣັດ—ຜູ້ທີ່ມີຄວາມຮູ້ອັນສົມບູນບໍ່ສາມາດຖືກກີດກັນຈາກພາຍໃນມ່ານ—ສິ່ງແປຄວາມໝາຍຖືກເຮັດຂຶ້ນເພື່ອນຳເອົາບັນທຶກຂອງຊາວຢາເຣັດໄປຫາແສງສະຫວ່າງ.*

24*ກ* ອທ 6:5.
*ຂ* ພສສ 148:8.

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງຢາເຣັດ, (ບັດນີ້ພາຊະນະທີ່ຕຽມໄວ້ມີຢູ່ແປດລຳ) ໄດ້ອອກໄປຫາພູເຂົາ ຊຶ່ງເອີ້ນກັນວ່າ ພູເຊເລັມ, ຍ້ອນວ່າຄວາມສູງທີ່ສຸດຂອງມັນ, ແລະ ລາວໄດ້ຫລອມຫີນໃຫ້ເປັນກ້ອນນ້ອຍສິບຫົກກ້ອນອອກຈາກຫີນກ້ອນໜຶ່ງ, ແລະ ມັນຂາວ ແລະ ໃສຄືກັນກັບແກ້ວທີ່ສ່ອງຊອດໄດ້, ແລະ ລາວໄດ້ຖືມັນຂຶ້ນໄປເທິງຈອມພູ ແລະ ໄດ້ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ມີຄວາມວ່າ:

2 ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງໄດ້ກ່າວວ່າ ພວກຂ້ານ້ອຍ ຈະ ຕ້ອງ ຖືກ ນ້ຳຖ້ວມອ້ອມຮອບ. ບັດນີ້ ຈົ່ງທອດພຣະເນດເຖີດ, ໂອ້ ພຣະຜູ້ເປັນເຈົ້າ, ຂໍຢ່າພຣະພິໂລດຂ້າໃຊ້ຂອງພຣະອົງເລີຍ; ຍ້ອນວ່າຄວາມອ່ອນແອຂອງລາວທີ່ມີຕໍ່ພຣະພັກຂອງພຣະອົງ; ເພາະວ່າພວກຂ້ານ້ອຍຮູ້ຈັກວ່າ ພຣະອົງບໍລິສຸດ ແລະ ປະທັບຢູ່ໃນຟ້າສະຫວັນ, ແລະ ວ່າພວກຂ້ານ້ອຍບໍ່ມີຄ່າຄວນຕໍ່ພຣະພັກຂອງພຣະອົງ; ຍ້ອນ [ກ]ການຕົກ ໂດຍ [ຂ]ທຳມະຊາດຂອງພວກຂ້ານ້ອຍ ຈຶ່ງກັບມາຊົ່ວຢູ່ຕະຫລອດເວລາ; ເຖິງຢ່າງໃດກໍຕາມ, ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງໄດ້ປະທານພຣະບັນຍັດແກ່ພວກຂ້ານ້ອຍວ່າ ພວກຂ້ານ້ອຍຕ້ອງເອີ້ນຫາພຣະອົງ, ເພື່ອພວກຂ້ານ້ອຍຈະໄດ້ຮັບຄຳຕອບຕາມຄວາມປາດຖະໜາຂອງພວກຂ້ານ້ອຍ.

3 ຈົ່ງທອດພຣະເນດເຖີດ, ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງໄດ້ລົງໂທດພວກຂ້ານ້ອຍຍ້ອນວ່າຄວາມຊົ່ວຮ້າຍຂອງພວກຂ້ານ້ອຍ, ແລະ ໄດ້ຂັບໄລ່ພວກຂ້ານ້ອຍໄປໃນຊົ່ວເວລາຫລາຍປີມາແລ້ວ, ພວກຂ້ານ້ອຍໄດ້ຢູ່ໃນຖິ່ນແຫ້ງແລ້ງກັນດານ; ເຖິງຢ່າງໃດກໍຕາມ, ພຣະອົງຍັງ [ກ]ເມດຕາພວກຂ້ານ້ອຍຢູ່. ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງໂຜດທອດພຣະເນດພວກຂ້ານ້ອຍດ້ວຍຄວາມສົງສານ, ແລະ ຂໍໂຜດຫັນເອົາພຣະພິໂລດຂອງພຣະອົງອອກໄປຈາກຄົນເຫລົ່ານີ້ຂອງພຣະອົງດ້ວຍເຖີດ, ແລະ ຢ່າໄດ້ປ່ອຍໃຫ້ພວກເຂົາຂ້າມຄວາມເລິກຂອງທະເລດ້ວຍຄວາມມືດເລີຍ; ແຕ່ຂໍຈົ່ງໂຜດທອດພຣະເນດສິ່ງເຫລົ່ານີ້ ຊຶ່ງຂ້ານ້ອຍໄດ້ຫລໍ່ຫລອມອອກຈາກຫີນ.

4 ແລະ ຂ້ານ້ອຍຮູ້, ໂອ້ ພຣະຜູ້ເປັນເຈົ້າ, ວ່າພຣະອົງມີ [ກ]ອຳນາດທຸກຢ່າງ, ແລະ ສາມາດເຮັດອັນໃດກໍໄດ້ຕາມທີ່ພຣະອົງປາດຖະໜາເພື່ອຜົນປະໂຫຍດຂອງມະນຸດ; ໂອ້ ພຣະຜູ້ເປັນເຈົ້າ, ສະນັ້ນ ຂໍຈົ່ງໂຜດແຕະຕ້ອງຫີນເຫລົ່ານີ້ດ້ວຍນິ້ວພຣະຫັດຂອງພຣະອົງ, ແລະ ຕຽມມັນໄວ້ເພື່ອມັນຈະສ່ອງແສງອອກມາໃນຄວາມມືດ, ແລະ ມັນຈະໄດ້ສ່ອງແສງອອກມາຫາພວກຂ້ານ້ອຍຢູ່ໃນພາຊະນະຊຶ່ງພວກຂ້ານ້ອຍໄດ້ຕຽມໄວ້ແລ້ວ, ເພື່ອວ່າພວກຂ້ານ້ອຍຈະໄດ້ມີແສງສະຫວ່າງໃນຂະນະທີ່ຂ້າມນ້ຳທະເລໄປນັ້ນ.

5 ຈົ່ງທອດພຣະເນດດ້ວຍເຖີດ, ໂອ້ ພຣະອົງເຈົ້າເອີຍ, ພຣະອົງເຮັດສິ່ງນີ້ໄດ້. ພວກຂ້ານ້ອຍຮູ້ວ່າ ພຣະອົງສາມາດສະແດງລິດເດດອັນຍິ່ງໃຫຍ່ໄດ້, ຊຶ່ງ [ກ]ເບິ່ງເປັນເລື່ອງເລັກນ້ອຍໃນຄວາມເຂົ້າໃຈຂອງມະນຸດ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລານ້ອງຊາຍຂອງຢາເຣັດກ່າວຂໍ້ຄວາມເຫລົ່ານີ້ແລ້ວ, ຈົ່ງເບິ່ງ, [ກ]ພຣະຜູ້ເປັນເຈົ້າໄດ້ເດ່ພຣະຫັດອອກມາ ແລະ ແຕະຕ້ອງຫີນເຫລົ່ານັ້ນເທື່ອລະກ້ອນດ້ວຍນິ້ວພຣະຫັດ

**3** 2*ກ* ຄມພ ການຕົກຂອງອາດາມ ແລະ ເອວາ.
*ຂ* ມຊຢ 3:19.
3*ກ* ອທ 1:34–43.
4*ກ* ຄມພ ອຳນາດ.
5*ກ* ອຊຢ 55:8–9; 1 ນຟ 16:29.
6*ກ* ຄມພ ພຣະເຢຊູຄຣິດ.

ຂອງພຣະອົງ. ແລະ ຂມ່ານຖືກເອົາອອກໄປ
ຈາກຕາຂອງນ້ອງຊາຍຂອງຢາເຣັດ, ແລະ
ລາວໄດ້ເຫັນນິ້ວພຣະຫັດຂອງພຣະຜູ້ເປັນ
ເຈົ້າ; ແລະ ມັນຄືກັນກັບນິ້ວມືຂອງມະນຸດ,
ທີ່ມີເນື້ອໜັງ ແລະ ກະດູກ, ແລະ ນ້ອງຊາຍ
ຂອງຢາເຣັດໄດ້ລົ້ມລົງຢູ່ຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າດ້ວຍຄວາມຢ້ານກົວ.
7 ແລະ ພຣະຜູ້ເປັນເຈົ້າເຫັນວ່າ ນ້ອງ
ຊາຍຂອງຢາເຣັດໄດ້ລົ້ມລົງຢູ່ກັບພື້ນດິນ;
ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບລາວວ່າ:
ຈົ່ງລຸກຂຶ້ນເຖີດ, ເປັນຫຍັງເຈົ້າຈຶ່ງລົ້ມລົງ?
8 ແລະ ລາວໄດ້ທູນຕອບພຣະຜູ້ເປັນ
ເຈົ້າວ່າ: ຂ້ານ້ອຍໄດ້ເຫັນນິ້ວພຣະຫັດຂອງ
ພຣະຜູ້ເປັນເຈົ້າ, ແລະ ຂ້ານ້ອຍຢ້ານວ່າ
ພຣະອົງຈະລົງໂທດຂ້ານ້ອຍ; ເພາະວ່າຂ້າ
ນ້ອຍບໍ່ຮູ້ຈັກວ່າ ພຣະຜູ້ເປັນເຈົ້າມີເນື້ອໜັງ
ແລະ ກະດູກ.
9 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບລາວ
ວ່າ: ເປັນຍ້ອນສັດທາຂອງເຈົ້າ, ເຈົ້າຈຶ່ງໄດ້
ເຫັນວ່າເຮົາຈະຮັບເອົາ ກເນື້ອໜັງ ແລະ ກະ
ດູກ; ແລະ ບໍ່ເຄີຍມີຜູ້ໃດເລີຍທີ່ມາຢູ່ຕໍ່ໜ້າ
ເຮົາດ້ວຍສັດທາອັນໃຫຍ່ຫລວງຄືກັນກັບ
ເຈົ້າ; ເພາະວ່າຖ້າຫາກບໍ່ເປັນເຊັ່ນນັ້ນ ເຈົ້າ
ຈະເຫັນນິ້ວພຣະຫັດຂອງເຮົາບໍ່ໄດ້. ເຈົ້າ
ເຫັນຫລາຍກວ່ານີ້ບໍ່?
10 ແລະ ລາວໄດ້ທູນຕອບວ່າ: ບໍ່; ພຣະ
ອົງເຈົ້າເອີຍ, ຈົ່ງໂຜດປະກົດຕົວໃຫ້ຂ້າ
ນ້ອຍເຫັນແດ່ທ້ອນ.
11 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ລາວວ່າ: ເຈົ້າເຊື່ອຄຳເວົ້າຂອງເຮົາບໍ່?
12 ແລະ ລາວໄດ້ຕອບວ່າ: ເຊື່ອ, ພຣະອົງ
ເຈົ້າເອີຍ, ຂ້ານ້ອຍຮູ້ວ່າ ພຣະອົງກ່າວດ້ວຍ
ຄວາມຈິງ, ເພາະວ່າພຣະອົງເປັນພຣະເຈົ້າ
ແຫ່ງຄວາມຈິງ, ແລະ ບໍ່ ກສາມາດເວົ້າຕົວະ.
13 ແລະ ເວລາລາວກ່າວຂໍ້ຄວາມນີ້
ແລ້ວ, ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ ກປະກົດ
ຕົວໃຫ້ລາວເຫັນ, ແລະ ກ່າວວ່າ: ຂຍ້ອນ
ວ່າເຈົ້າຮູ້ຈັກເລື່ອງເຫລົ່ານີ້ ເຈົ້າຈຶ່ງຖືກໄຖ່
ອອກຈາກການຕົກແລ້ວ; ສະນັ້ນ ເຈົ້າຈຶ່ງ
ຖືກນຳເອົາກັບມາຫາທີ່ປະທັບຂອງເຮົາ;
ສະນັ້ນ ເຮົາຈຶ່ງໄດ້ ຄປະກົດຕົວແກ່ເຈົ້າ.
14 ຈົ່ງເບິ່ງ, ເຮົາຄືຜູ້ທີ່ຖືກຕຽມໄວ້ນັບ
ຕັ້ງແຕ່ການວາງຮາກຖານຂອງໂລກ ເພື່ອ
ກໄຖ່ຖອນຜູ້ຄົນຂອງເຮົາ. ຈົ່ງເບິ່ງ, ເຮົາຄື
ພຣະເຢຊູຄຣິດ. ເຮົາຄື ຂພຣະບິດາ ແລະ
ພຣະບຸດ. ໂດຍຜ່ານທາງເຮົາມະນຸດຊາດ
ທັງປວງຈະມີ ຄຊີວິດອັນຕະຫລອດການ,
ຕະຫລອດທັງທຸກຄົນຜູ້ທີ່ເຊື່ອໃນພຣະ
ນາມຂອງເຮົາ; ແລະ ພວກເຂົາຈະກາຍ
ເປັນ ງບຸດ ແລະ ທິດາຂອງເຮົາ.
15 ແລະ ເຮົາບໍ່ເຄີຍປະກົດຕົວແກ່ມະນຸດ
ຜູ້ທີ່ເຮົາສ້າງມາກ່ອນເລີຍ, ເພາະວ່າມະນຸດ
ບໍ່ເຄີຍ ກເຊື່ອໃນເຮົາຄືກັນກັບເຈົ້າເຊື່ອ.
ເຈົ້າເຫັນແລ້ວບໍວ່າ ເຈົ້າໄດ້ຖືກສ້າງຂຶ້ນ
ຕາມ ຂຮູບລັກສະນະຂອງເຮົາ? ແທ້ຈິງ
ແລ້ວ, ມະນຸດທັງໝົດໄດ້ຖືກສ້າງມາຕັ້ງແຕ່
ຕົ້ນຕາມຮູບລັກສະນະຂອງເຮົາເອງ.
16 ຈົ່ງເບິ່ງ, ຮ່າງກາຍຊຶ່ງເຈົ້າເຫັນຢູ່ດຽວ
ນີ້, ເປັນຮ່າງກາຍທາງ ກວິນຍານຂອງເຮົາ;
ແລະ ເຮົາໄດ້ສ້າງມະນຸດຕາມລັກສະນະ

6 ຂ ອທ 12:19, 21.
9 ກ ຄມພ ເນື້ອໜັງ; ພຣະເຢຊູຄຣິດ; ມະຕະ, ຄວາມເປັນມະຕະ.
12 ກ ຮຣ 6:18.
13 ກ ຄພ 67:10–11.
ຂ ອນ 1:6–8.
ຄ ຄມພ ພຣະເຢຊູຄຣິດ—ການເປັນຢູ່ຂອງພຣະຄຣິດກ່ອນມະຕະ.
14 ກ ຄມພ ໄຖ່, ການໄຖ່, ຖືກໄຖ່; ພຣະຜູ້ໄຖ່.
ຂ ມຊຢ 15:1–4.
ຄ ມຊຢ 16:9.
ງ ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
15 ກ ຄມພ ເຊື່ອ, ຄວາມເຊື່ອ.
ຂ ປຖກ 1:26–27; ມຊຢ 7:27; ຄພ 20:17–18.
16 ກ ຄມພ ວິນຍານ.

ຮ່າງກາຍທາງວິນຍານຂອງເຮົາ; ແລະ ຄື
ກັນກັບທີ່ເຮົາປະກົດແກ່ເຈົ້າໃນທາງວິນ
ຍານສັນໃດ ເຮົາຈະປະກົດແກ່ຜູ້ຄົນຂອງ
ເຮົາໃນທາງເນື້ອໜັງສັນນັ້ນ.
17 ແລະ ບັດນີ້, ດັ່ງທີ່ຂ້າພະເຈົ້າໂມໂຣ
ໄນກ່າວໄວ້ວ່າ ຂ້າພະເຈົ້າບໍ່ອາດບັນທຶກ
ເລື່ອງລາວຂອງສິ່ງເຫລົ່ານີ້ໄວ້ໄດ້ຢ່າງຄົບ
ຖ້ວນ, ສະນັ້ນ ມັນຈຶ່ງພຽງພໍສຳລັບຂ້າພະ
ເຈົ້າທີ່ຈະກ່າວວ່າ ພຣະເຢຊູໄດ້ປະກົດແກ່
ຊາຍຄົນນີ້ໃນທາງວິນຍານແລ້ວ, ຕາມ
ແບບ ແລະ ໃນຮູບຮ່າງລັກສະນະຂອງ
ຮ່າງກາຍອັນດຽວກັນກັບທີ່ພຣະອົງໄດ້
ᵃສະແດງແກ່ຊາວນີໄຟມາແລ້ວ.
18 ແລະ ພຣະອົງໄດ້ປະຕິບັດສາດສະ
ໜາກິດແກ່ນ້ອງຊາຍຂອງຢາເຣັດ ຊຶ່ງຄືກັນ
ກັບທີ່ພຣະອົງໄດ້ປະຕິບັດສາດສະໜາກິດ
ແກ່ຊາວນີໄຟ; ແລະ ທັງໝົດນີ້ກໍເພື່ອເຮັດ
ໃຫ້ຊາຍຄົນນີ້ຮູ້ຈັກວ່າ ພຣະອົງຄືພຣະເຈົ້າ,
ຍ້ອນວ່າວຽກງານອັນຍິ່ງໃຫຍ່ຫລາຍຢ່າງ
ຊຶ່ງພຣະຜູ້ເປັນເຈົ້າໄດ້ສະແດງແກ່ລາວ.
19 ແລະ ເປັນຍ້ອນຄວາມຮູ້ຂອງຊາຍ
ຄົນນີ້ ຈຶ່ງບໍ່ສາມາດກີດກັນລາວຈາກການ
ເຫັນພາຍໃນ ᵃມ່ານ; ແລະ ລາວໄດ້ເຫັນ
ນິ້ວພຣະຫັດຂອງພຣະເຢຊູ, ຊຶ່ງເວລາເຫັນ
ແລ້ວ ລາວກໍລົ້ມລົງດ້ວຍຄວາມຢ້ານກົວ,
ເພາະລາວຮູ້ວ່າມັນເປັນນິ້ວພຣະຫັດຂອງ
ພຣະຜູ້ເປັນເຈົ້າ; ແລະ ລາວບໍ່ມີສັດທາອີກ
ຕໍ່ໄປ, ເພາະວ່າລາວຮູ້ແລ້ວໂດຍບໍ່ມີຄວາມ
ສົງໄສເລີຍ.
20 ດັ່ງນັ້ນ, ຍ້ອນວ່າລາວມີຄວາມຮູ້ອັນ
ສົມບູນກ່ຽວກັບພຣະເຈົ້າ, ຈຶ່ງ ᵃບໍ່ສາມາດ
ກີດກັນລາວຈາກພາຍໃນມ່ານ; ສະນັ້ນ
ລາວຈຶ່ງໄດ້ເຫັນພຣະເຢຊູ; ແລະ ພຣະອົງ
ໄດ້ປະຕິບັດສາດສະໜາກິດແກ່ລາວ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າກ່າວກັບນ້ອງຊາຍຂອງ
ຢາເຣັດວ່າ: ຈົ່ງເບິ່ງ, ເຈົ້າຢ່າໄດ້ໃຫ້ສິ່ງ
ເຫລົ່ານີ້ຊຶ່ງເຈົ້າໄດ້ເຫັນ ແລະ ໄດ້ຍິນອອກ
ໄປຫາໂລກມະນຸດ, ຈົນກວ່າ ᵃເວລາຈະມາ
ຮອດເພື່ອເຮົາຈະໄດ້ແຜ່ບາລະມີນາມຂອງ
ເຮົາໃນເນື້ອໜັງ; ດັ່ງນັ້ນ, ເຈົ້າຈົ່ງເກັບກຳ
ເລື່ອງທີ່ເຈົ້າໄດ້ເຫັນ ແລະ ໄດ້ຍິນທັງໝົດ
ໄວ້, ແລະ ຢ່າໄດ້ເປີດເຜີຍມັນຕໍ່ຄົນໃດ.
22 ແລະ ຈົ່ງເບິ່ງ, ເວລາເຈົ້າຈະມາຫາ
ເຮົາ, ເຈົ້າຈົ່ງຂຽນມັນ ແລະ ຜະນຶກມັນໄວ້,
ເພື່ອຈະບໍ່ມີຜູ້ໃດແປຄວາມໝາຍຂອງມັນ
ໄດ້; ເພາະເຈົ້າຈະຂຽນມັນເປັນພາສາທີ່
ເຂົາອ່ານບໍ່ໄດ້.
23 ແລະ ຈົ່ງເບິ່ງ, ຫີນ ᵃສອງກ້ອນນີ້, ເຮົາ
ຈະເອົາໃຫ້ເຈົ້າ, ແລະ ເຈົ້າຈົ່ງຜະນຶກມັນໄວ້
ກັບສິ່ງທີ່ເຈົ້າຈະຂຽນນັ້ນ.
24 ເພາະຈົ່ງເບິ່ງ, ພາສາຊຶ່ງເຈົ້າຈະຂຽນ
ນັ້ນ ເຮົາຈະເຮັດໃຫ້ຫຍຸ້ງຍາກສັບສົນ; ດັ່ງ
ນັ້ນ ໃນເວລາອັນເໝາະສົມຂອງເຮົາ, ເຮົາ
ຈະເຮັດໃຫ້ຫີນເຫລົ່ານີ້ຂະຫຍາຍເລື່ອງທີ່
ເຈົ້າຈະຂຽນອອກສູ່ສາຍຕາຂອງມະນຸດ.
25 ແລະ ເວລາພຣະຜູ້ເປັນເຈົ້າໄດ້ກ່າວ
ຂໍ້ຄວາມເຫລົ່ານີ້ແລ້ວ, ພຣະອົງໄດ້ສະແດງ
ໃຫ້ນ້ອງຊາຍຂອງຢາເຣັດເຫັນຜູ້ອາໄສ
ᵃທັງໝົດຂອງແຜ່ນດິນໂລກມາແຕ່ກ່ອນ,
ແລະ ທັງໝົດທີ່ຈະເປັນຢູ່ນຳອີກ; ແລະ
ພຣະອົງບໍ່ໄດ້ປິດບັງຄົນເຫລົ່ານັ້ນຈາກ
ສາຍຕາຂອງລາວເລີຍຈົນເຖິງທີ່ສຸດຂອງ
ແຜ່ນດິນໂລກ.
26 ເພາະວ່າພຣະອົງໄດ້ກ່າວກັບລາວ
ໃນເວລາກ່ອນນັ້ນ, ວ່າ ᵃຖ້າຫາກລາວ

17 *ກ* 3 ນຟ 11:8–10.
19 *ກ* ຄມພ ມ່ານ.
20 *ກ* ອທ 12:19–21.
21 *ກ* ອທ 4:1.
23 *ກ* ຄມພ ອຸລີມ ແລະ ທຸມມີມ.
25 *ກ* ມຊ 1:8.
26 *ກ* ອທ 3:11–13.

[ຂ]ເຊື່ອ ໃນ ພຣະ ອົງ ວ່າ ພຣະ ອົງ ສາ ມາດ
ສະແດງ [ຄ]ທຸກ ສິ່ງທຸກຢ່າງ ແກ່ລາວ—ມັນ
ກໍຈະຖືກສະແດງ ແກ່ລາວ; ສະນັ້ນ ພຣະ
ຜູ້ເປັນເຈົ້າຈຶ່ງບໍ່ໄດ້ປິດບັງສິ່ງໃດຈາກລາວ
ເລີຍ, ເພາະລາວຮູ້ວ່າ ພຣະຜູ້ເປັນເຈົ້າສາ
ມາດສະແດງທຸກສິ່ງທຸກຢ່າງແກ່ລາວ.

27 ແລະ ພຣະ ຜູ້ ເປັນ ເຈົ້າບອກລາວ
ວ່າ: ຈົ່ງຂຽນເລື່ອງເຫລົ່ານີ້ ແລະ [ກ]ຜະນຶກ
ມັນໄວ້; ແລະ ເຮົາຈະສະແດງມັນແກ່ລູກ
ຫລານມະນຸດ ໃນເວລາອັນເໝາະສົມຂອງ
ເຮົາ.

28 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ພຣະຜູ້ເປັນເຈົ້າໄດ້ບັນຊາລາວວ່າ ລາວຈະ
ຕ້ອງຜະນຶກ [ກ]ຫີນສອງກ້ອນທີ່ລາວຮັບມາ
ນັ້ນ, ແລະ ບໍ່ໃຫ້ສະແດງມັນຕໍ່ຜູ້ໃດ, ຈົນ
ກວ່າພຣະຜູ້ເປັນເຈົ້າຈະສະແດງມັນແກ່ລູກ
ຫລານມະນຸດເອງ.

## ບົດທີ 4

*ໂມ ໂຣ ໄນຖືກບັນຊາໃຫ້ຜະນຶກການຂຽນ ຂອງນ້ອງຊາຍຂອງຢາເຣັດໄວ້—ມັນຈະ ບໍ່ ໄດ້ ຖືກ ເປີດເຜີຍຈົນກວ່າມະນຸດຈະມີ ສັດທາຄືກັນກັບນ້ອງຊາຍຂອງຢາເຣັດ— ພຣະຄຣິດບັນຊາໃຫ້ມະນຸດເຊື່ອຖືໃນຄໍາ ຂອງພຣະອົງ ແລະ ຄໍາຂອງສານຸສິດຂອງ ພຣະອົງ—ມະນຸດຖືກບັນຊາໃຫ້ກັບໃຈ, ເຊື່ອຟັງພຣະກິດຕິຄຸນ, ແລະ ຮັບຄວາມ ລອດ.*

1 ແລະ ພຣະຜູ້ເປັນເຈົ້າໄດ້ບັນຊານ້ອງ
ຊາຍ ຂອງຢາເຣັດ ໃຫ້ລົງ ໄປ ຈາກ ພູ ເຂົາ
ຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ, ແລະ
ໃຫ້ [ກ]ຂຽນເລື່ອງທີ່ລາວໄດ້ເຫັນໄວ້, ແລະ
ເລື່ອງເຫລົ່ານີ້ຖືກຫ້າມບໍ່ໃຫ້ເອົາອອກມາ
ຫາລູກຫລານມະນຸດ [ຂ]ຈົນກວ່າຫລັງຈາກ
ພຣະອົງຈະຖືກຍົກຂຶ້ນເທິງໄມ້ກາງແຂນ;
ແລະ ດ້ວຍເຫດນີ້ກະສັດໂມໄຊຢາຈຶ່ງໄດ້
ເກັບມັນໄວ້, ເພື່ອມັນຈະບໍ່ໄດ້ອອກມາຫາ
ໂລກນີ້ ຈົນກວ່າຫລັງຈາກພຣະຄຣິດໄດ້ມາ
ປະກົດຕົວຕໍ່ຜູ້ຄົນຂອງພຣະອົງ.

2 ແລະ ຫລັງ ຈາກ ພຣະ ຄຣິດ ໄດ້ມາ
ປະກົດຕົວຢ່າງແທ້ຈິງຕໍ່ຜູ້ຄົນຂອງພຣະອົງ
ແລ້ວ ພຣະອົງໄດ້ບັນຊາວ່າ ສິ່ງເຫລົ່ານັ້ນ
ຄວນຖືກສະແດງໃຫ້ປະຈັກ.

3 ແລະ ບັດ ນີ້, ຫລັງຈາກນັ້ນພວກເຂົາ
ທັງໝົດໄດ້ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື;
ແລະ ບໍ່ມີຜູ້ໃດເລີຍນອກຈາກຊາວເລມັນ
ເທົ່ານັ້ນ, ແລະ ພວກເຂົາປະຕິເສດພຣະ
ກິດຕິຄຸນຂອງພຣະຄຣິດ; ສະນັ້ນຂ້າພະ
ເຈົ້າຈຶ່ງໄດ້ຮັບບັນຊາໃຫ້ [ກ]ເຊື່ອງມັນໄວ້ໃນ
ດິນອີກ.

4 ຈົ່ງເບິ່ງ, ຂ້າພະເຈົ້າໄດ້ຂຽນເລື່ອງຊຶ່ງ
ນ້ອງຊາຍຂອງຢາເຣັດໄດ້ເຫັນນັ້ນໄວ້ໃນ
ແຜ່ນຈາລຶກເຫລົ່ານີ້; ແລະ ບໍ່ເຄີຍມີເລື່ອງ
ໃດທີ່ສະແດງອອກໃຫ້ເປັນເລື່ອງທີ່ຍິ່ງໃຫຍ່
ໄປກວ່າເລື່ອງທີ່ສະແດງໃຫ້ປະຈັກແກ່ນ້ອງ
ຊາຍຂອງຢາເຣັດ.

5 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງບັນຊາຂ້າ
ພະເຈົ້າໃຫ້ຂຽນເລື່ອງນີ້ໄວ້; ແລະ ຂ້າພະ
ເຈົ້າກໍໄດ້ຂຽນມັນໄວ້. ແລະ ພຣະອົງໄດ້
ບັນຊາໃຫ້ຂ້າພະເຈົ້າ [ກ]ຜະນຶກມັນໄວ້; ແລະ
ພຣະອົງໄດ້ບັນຊາໃຫ້ຂ້າພະເຈົ້າຜະນຶກ
ການແປຂອງມັນໄວ້ນໍາອີກ; ດັ່ງນັ້ນ ຂ້າພະ
ເຈົ້າຈຶ່ງໄດ້ຜະນຶກ [ຂ]ສິ່ງແປຄວາມໝາຍໄວ້

26 *ຂ* ຄມພ ເຊື່ອ, ຄວາມເຊື່ອ.
*ຄ* ອທ 4:4.
27 *ກ* 2 ນຟ 27:6–8.
28 *ກ* ຄພ 17:1.

**4** 1 *ກ* ອທ 12:24.
ຄມພ ພຣະຄໍາພີ.
*ຂ* ອທ 3:21.
3 *ກ* ມມ 8:14.

5 *ກ* ອທ 5:1.
*ຂ* ຄພ 17:1;
ຈສ—ປ 1:52.
ຄມພ ອຸລິມ ແລະ ທຸມມິມ.

ຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ.
6 ເພາະພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າວ່າ: ເລື່ອງເຫລົ່ານີ້ຈະບໍ່ອອກໄປ
ຫາຄົນຕ່າງຊາດຈົນກວ່າຈະຮອດມື້ທີ່ພວກ
ເຂົາຈະກັບໃຈຈາກຄວາມຊົ່ວຮ້າຍຂອງ
ພວກເຂົາ, ແລະ ກັບມາເປັນຄົນສະອາດຕໍ່
ພຣະພັກຂອງພຣະຜູ້ເປັນເຈົ້າ.
7 ແລະ ໃນມື້ນັ້ນ ພວກເຂົາຈະໃຊ້ສັດທາ
ໃນເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ, ຄືກັນກັບ
ນ້ອງຊາຍຂອງຢາເຣັດເຮັດໄປນັ້ນ, ເພື່ອ
ພວກເຂົາຈະໄດ້ຮັບ [ກ]ການຊຳລະໃຫ້ບໍລິ
ສຸດໃນເຮົາ, ເວລານັ້ນເຮົາຈະສະແດງສິ່ງທີ່
ນ້ອງຊາຍຂອງຢາເຣັດໄດ້ເຫັນ ໃຫ້ປະຈັກ
ແກ່ພວກເຂົາ, ຈົນກະທັ້ງການເປີດເຜີຍ
ທັງໝົດຂອງເຮົາແກ່ພວກເຂົາ, ພຣະເຢຊູ
ຄຣິດ, ພຣະບຸດຂອງພຣະເຈົ້າ, [ຂ]ພຣະບິດາ
ແຫ່ງຟ້າສະຫວັນ ແລະ ແຜ່ນດິນໂລກລວມ
ທັງທຸກສິ່ງທຸກຢ່າງໃນນັ້ນກ່າວໄວ້.
8 ແລະ ຄົນທີ່ [ກ]ຂັດຄ້ານພຣະຄຳຂອງ
ພຣະຜູ້ເປັນເຈົ້າກໍຂໍໃຫ້ເຂົາຖືກສາບແຊ່ງ;
ແລະ ຄົນທີ່ [ຂ]ປະຕິເສດສິ່ງເຫລົ່ານີ້ກໍຂໍໃຫ້
ເຂົາຖືກສາບແຊ່ງ; ເພາະວ່າເຮົາຈະ [ຄ]ບໍ່
ສະແດງສິ່ງທີ່ຍິ່ງໃຫຍ່ກວ່ານີ້ແກ່ພວກເຂົາ,
ພຣະເຢຊູຄຣິດໄດ້ກ່າວ; ເພາະເຮົາຄືຜູ້ທີ່
ກ່າວ.
9 ແລະ ດ້ວຍຄຳບັນຊາຂອງເຮົາ ຟ້າ
ສະຫວັນຈຶ່ງເປີດອອກ ແລະ [ກ]ປິດ; ແລະ
ດ້ວຍຄຳຂອງເຮົາ [ຂ]ແຜ່ນດິນໂລກຈຶ່ງສັ່ນ
ສະເທືອນ; ແລະ ດ້ວຍຄຳບັນຊາຂອງເຮົາ
ຜູ້ອາໄສຢູ່ໃນນັ້ນຈຶ່ງຕາຍໄປເຖິງແມ່ນດ້ວຍ
ໄຟເຜົາ.
10 ແລະ ຄົນທີ່ບໍ່ເຊື່ອໃນຄຳຂອງເຮົາ
ຍ່ອມບໍ່ເຊື່ອໃນຄຳຂອງສານຸສິດຂອງເຮົາ
ຄືກັນ; ແລະ ຖ້າຫາກເປັນໄປວ່າເຮົາບໍ່ໄດ້
ກ່າວ ກໍໃຫ້ເຈົ້າຕັດສິນເອງ; ເພາະວ່າເຈົ້າ
ຈະຮູ້ຈັກວ່າ ແມ່ນເຮົານີ້ແຫລະຄືຜູ້ກ່າວໃນ
[ກ]ວັນສຸດທ້າຍນັ້ນ.
11 ແຕ່ວ່າຄົນທີ່ [ກ]ເຊື່ອໃນສິ່ງທີ່ເຮົາໄດ້
ກ່າວມານີ້, ເຮົາຈະໄປຢ້ຽມຢາມເຂົາດ້ວຍ
ການສະແດງວິນຍານຂອງເຮົາໃຫ້ປະຈັກ,
ແລ້ວເຂົາຈະຮູ້ຈັກ ແລະ ເປັນພະຍານ.
ເປັນຍ້ອນວິນຍານຂອງເຮົາ ເຂົາຈຶ່ງຈະ [ຂ]ຮູ້
ຈັກສິ່ງເຫລົ່ານີ້ວ່າເປັນ [ຄ]ຄວາມຈິງ; ເພາະ
ວ່າມັນຈະຊັກຊວນໃຫ້ມະນຸດສ້າງຄວາມດີ.
12 ແລະ ສິ່ງໃດກໍຕາມທີ່ຊັກຊວນມະນຸດ
ໃຫ້ສ້າງຄວາມດີນັ້ນມາຈາກເຮົາ; ເພາະວ່າ
[ກ]ຄວາມດີບໍ່ໄດ້ມາຈາກຜູ້ໃດນອກຈາກມາ
ຈາກເຮົາເທົ່ານັ້ນ. ເຮົາຄືຜູ້ດຽວກັນກັບຜູ້ທີ່
ນຳພາມະນຸດໄປຫາຄວາມດີທັງໝົດ; ຄົນທີ່
[ຂ]ບໍ່ເຊື່ອໃນຄຳຂອງເຮົາຈະບໍ່ເຊື່ອໃນເຮົາ
ວ່າເຮົາຊົງພຣະຊົນຢູ່; ແລະ ຄົນທີ່ບໍ່ເຊື່ອ
ໃນເຮົາກໍຈະບໍ່ເຊື່ອໃນພຣະບິດາຜູ້ສົ່ງເຮົາ
ມາ. ເພາະຈົ່ງເບິ່ງ, ເຮົາຄືພຣະບິດາ, ເຮົາ
ຄື [ຄ]ຄວາມສະຫວ່າງ, ແລະ [ງ]ຊີວິດ ແລະ
ຄວາມຈິງຂອງໂລກ.
13 ຈົ່ງ [ກ]ມາຫາເຮົາ, ໂອ້ ເຈົ້າຄົນຕ່າງ
ຊາດເອີຍ, ແລະ ເຮົາຈະສະແດງສິ່ງທີ່ຍິ່ງ
ໃຫຍ່ກວ່ານີ້ແກ່ເຈົ້າຄື, ຄວາມຮູ້ທີ່ຖືກເຊື່ອງ

7 ກ ຄນພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
ຂ ມຊຢ 3:8.
8 ກ 3 ນຟ 29:5–6; ມມ 8:17.
ຂ 2 ນຟ 27:14; 28:29–30.
ຄ ແອວ 12:10–11; 3 ນຟ 26:9–10.
9 ກ 1 ກສ 8:35; ຄພ 77:8.
ຂ ຮລມ 12:8–18; ມມ 5:23.
10 ກ 2 ນຟ 33:10–15.
11 ກ ຄພ 5:16.
ຂ ຄນພ ປະຈັກພະຍານ.
ຄ ອທ 5:3–4; ມຣນ 10:4–5.
12 ກ ແອວ 5:40; ມຣນ 7:16–17.
ຂ 3 ນຟ 28:34.
ຄ ຄນພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
ງ ຢຮ 8:12; ແອວ 38:9.
13 ກ 3 ນຟ 12:2–3.

ໄວ້ຍ້ອນວ່າຄວາມບໍ່ເຊື່ອຖື.
14 ຈົ່ງມາຫາເຮົາ, ໂອ້ ເຈົ້າເຊື້ອສາຍ
ອິດສະຣາເອນເອີຍ, ແລະ ສິ່ງທີ່ຍິ່ງໃຫຍ່
ຊຶ່ງພຣະບິດາໄດ້ເກັບກຳໄວ້ໃຫ້ເຈົ້ານັບຕັ້ງ
ແຕ່ການວາງຮາກຖານຂອງໂລກ ຈະຖືກ
[ກ]ສະແດງໃຫ້ປະຈັກແກ່ເຈົ້າ, ແລະ ມັນຍັງບໍ່
ໄດ້ມາຫາເຈົ້າເທື່ອຍ້ອນວ່າຄວາມບໍ່ເຊື່ອຖື.
15 ຈົ່ງເບິ່ງ, ເວລາເຈົ້າເປີດມ່ານຂອງ
ຄວາມບໍ່ເຊື່ອຖືນັ້ນອອກ ຊຶ່ງເຮັດໃຫ້ເຈົ້າຄົງ
ຢູ່ໃນສະພາບອັນເປັນຕາຢ້ານຂອງຄວາມ
ຊົ່ວຮ້າຍ ແລະ ຄວາມແຂງກະດ້າງຂອງ
ໃຈ, ແລະ ຄວາມມືດມົວຂອງຈິດໃຈ ເວລາ
ນັ້ນສິ່ງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນ ຊຶ່ງ
ຖືກ [ກ]ເຊື່ອງໄວ້ບໍ່ໃຫ້ເຈົ້າເຫັນຕັ້ງແຕ່ການ
ວາງຮາກຖານຂອງໂລກ—ແທ້ຈິງແລ້ວ,
ເວລາເຈົ້າເອີ້ນຫາພຣະບິດາໃນນາມຂອງ
ເຮົາດ້ວຍໃຈທີ່ຊອກຊ້ຳ, ແລະ ວິນຍານທີ່
ສຳນຶກຜິດ, ເວລານັ້ນເຈົ້າຈະຮູ້ຈັກວ່າ ພຣະ
ບິດາໄດ້ນຶກເຖິງພັນທະສັນຍາຊຶ່ງພຣະອົງ
ເຮັດໄວ້ກັບບັນພະບຸລຸດຂອງເຈົ້າ, ໂອ້ ເຊື້ອ
ສາຍອິດສະຣາເອນ.
16 ແລະ ເວລານັ້ນ [ກ]ການເປີດເຜີຍຂອງ
ເຮົາຊຶ່ງເຮົາໃຫ້ໂຢຮັນຜູ້ຮັບໃຊ້ຂອງເຮົາ
ຂຽນໄວ້ຈະຖືກເປີດອອກຕໍ່ສາຍຕາຂອງ
ຜູ້ຄົນທັງໝົດ. ຈົ່ງຈື່ຈຳໄວ້ວ່າ ເວລາເຈົ້າ
ຈະເຫັນສິ່ງເຫລົ່ານີ້ແລ້ວ ເຈົ້າຈະຮູ້ຈັກວ່າ
ເວລາໃກ້ເຂົ້າມາເຖິງແລ້ວທີ່ມັນຈະຖືກ
ສະແດງໃຫ້ປະຈັກໂດຍຢ່າງແທ້ຈິງ.
17 ສະນັ້ນ [ກ], ເວລາເຈົ້າຈະໄດ້ຮັບບັນ
ທຶກນີ້ ເຈົ້າຈະຮູ້ຈັກວ່າ ວຽກງານຂອງພຣະ
ບິດາໄດ້ເລີ່ມຕົ້ນທົ່ວຜືນແຜ່ນດິນແລ້ວ.
18 ສະນັ້ນ, ຈົ່ງ [ກ]ກັບໃຈ ເຈົ້າທັງຫລາຍ
ທີ່ສຸດຂອງແຜ່ນດິນໂລກ, ແລະ ຈົ່ງມາຫາ
ເຮົາ, ແລະ ເຊື່ອໃນພຣະກິດຕິຄຸນຂອງ
ເຮົາ, ແລະ ຮັບ [ຂ]ບັບຕິສະມາໃນນາມຂອງ
ເຮົາ; ເພາະວ່າຄົນທີ່ເຊື່ອ ແລະ ຮັບບັບຕິ
ສະມາ ຈະລອດ, ແຕ່ຄົນທີ່ບໍ່ເຊື່ອຈະອັບປະ
ໄຫຍດ; ແລະ [ຄ]ເຄື່ອງໝາຍຈະຕິດຕາມຄົນ
ທີ່ເຊື່ອໃນນາມຂອງເຮົາ.
19 ແລະ ຄົນທີ່ຖືກພົບວ່າ [ກ]ຊື່ສັດຕໍ່ນາມ
ຂອງເຮົາຍ່ອມເປັນສຸກໃນວັນສຸດທ້າຍ,
ເພາະວ່າເຂົາຈະຖືກຍົກຂຶ້ນໃຫ້ຢູ່ໃນອານາ
ຈັກ ຊຶ່ງໄດ້ຕຽມໄວ້ແລ້ວໃຫ້ເຂົາ [ຂ]ນັບຕັ້ງ
ແຕ່ການວາງຮາກຖານຂອງໂລກ. ແລະ ຈົ່ງ
ເບິ່ງ ເຮົາຄືຜູ້ທີ່ກ່າວມັນ. ອາແມນ.

## ບົດທີ 5

*ພະຍານສາມຄົນ ແລະ ຜົນງານເອງຈະຢືນ ເປັນປະຈັກພະຍານເຖິງຄວາມຈິງອັນສົມບູນຂອງພຣະຄຳພີມໍມອນ.*

1 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນໄດ້
ຂຽນຂໍ້ຄວາມຊຶ່ງຂ້າພະເຈົ້າໄດ້ຮັບບັນຊາ,
ຕາມຄວາມຈື່ຈຳຂອງຂ້າພະເຈົ້າ; ແລະ ຂ້າ
ພະເຈົ້າໄດ້ບອກທ່ານແລ້ວກ່ຽວກັບເລື່ອງ
ທີ່ຂ້າພະເຈົ້າໄດ້ [ກ]ຜະນຶກໄວ້; ສະນັ້ນ ຢ່າ
ໄດ້ແຕະຕ້ອງມັນເລີຍເພື່ອຈະແປ ເພາະວ່າ
ທ່ານຖືກຫ້າມຈາກສິ່ງເຫລົ່ານັ້ນ, ເວັ້ນເສຍ
ແຕ່ມັນຈະເປັນໄປໂດຍຄວາມສະຫລຽວ
ສະຫລາດຂອງພຣະເຈົ້າໃນເວລາຕໍ່ໄປ.

14 *ກ* ຄພ 121:26–29.
15 *ກ* 2 ນຟ 27:10.
16 *ກ* ພນມ 1:1;
1 ນຟ 14:18–27.
17 *ກ* 3 ນຟ 21:1–9, 28.
18 *ກ* 3 ນຟ 27:20;
ມຣນ 7:34.
*ຂ* ຢຣ 3:3–5.
ຄມພ ບັບຕິສະມາ, ໃຫ້
ບັບຕິສະມາ—ຈຳເປັນ.
*ຄ* ຄມພ ຂອງປະທານ
ແຫ່ງພຣະວິນຍານ.
19 *ກ* ມຊຢ 2:41;
ຄພ 6:13.
ຄມພ ພຣະເຢຊູຄຣິດ—
ການຮັບເອົາພຣະນາມຂອງ
ພຣະເຢຊູຄຣິດໄວ້ກັບເຮົາ.
*ຂ* 2 ນຟ 9:18.
**5** 1 *ກ* 2 ນຟ 27:7–8, 21;
ອທ 4:4–7.

2 ແລະ ຈົ່ງເບິ່ງ, ທ່ານອາດຈະໄດ້ຮັບສິດ
ທິພິເສດເພື່ອຈະໄດ້ ສະແດງແຜ່ນ ຈາລຶກ
ແກ່ [ກ]ຄົນເຫລົ່ານັ້ນຜູ້ທີ່ຈະ ຊ່ວຍນຳວຽກ
ງານນີ້ອອກມາ;
3 ແລະ ຈະສະແດງຕໍ່ຄົນ [ກ]ສາມຄົນໂດຍ
ອຳນາດຂອງພຣະເຈົ້າ; ດັ່ງນັ້ນ ພວກເພິ່ນ
ຈຶ່ງຈະ [ຂ]ຮູ້ຈັກເຖິງຄວາມແນ່ນອນວ່າ ສິ່ງ
ເຫລົ່ານີ້ເປັນ [ຄ]ຄວາມຈິງ.
4 ແລະ ດ້ວຍປາກຂອງ [ກ]ພະຍານສາມ
ຄົນ ສິ່ງເຫລົ່ານີ້ຈະຖືກສະຖາປະນາຂຶ້ນ;
ແລະ ປະຈັກພະຍານຂອງສາມຄົນ, ແລະ
ວຽກງານນີ້ ຊຶ່ງເປັນວຽກງານທີ່ຈະສະແດງ
ເຖິງອຳນາດຂອງພຣະເຈົ້າ ແລະ ຄຳຂອງ
ພຣະອົງອີກ, ອັນເປັນສິ່ງທີ່ພຣະບິດາ,
ແລະ ພຣະບຸດ, ແລະ ພຣະວິນຍານບໍລິສຸດ
ເປັນພະຍານ—ແລະ ທັງໝົດນີ້ ຈະຢູ່ເປັນ
ປະຈັກພະຍານກ່າວໂທດໂລກໃນວັນສຸດ
ທ້າຍ.
5 ແລະ ຖ້າຫາກເປັນໄປວ່າ ພວກເຂົາ
ກັບໃຈ ແລະ ເຂົ້າ [ກ]ມາຫາພຣະບິດາໃນ
ພຣະນາມຂອງພຣະເຢຊູ, ພວກເຂົາຈະຖືກ
ຮັບເຂົ້າໃນອານາຈັກຂອງພຣະເຈົ້າ.
6 ແລະ ບັດນີ້, ຖ້າຫາກຂ້າພະເຈົ້າບໍ່ມີສິດ
ອຳນາດໃນສິ່ງເຫລົ່ານີ້ແລ້ວ, ທ່ານຈົ່ງຕັດ
ສິນເຖີດ; ເພາະວ່າທ່ານຈະຮູ້ຈັກວ່າ ຂ້າພະ
ເຈົ້າມີສິດອຳນາດເວລາທ່ານເຫັນຂ້າພະ
ເຈົ້າ, ແລະ ພວກເຮົາຈະຢືນຢູ່ຕໍ່ພຣະພັກ
ຂອງພຣະເຈົ້າໃນວັນສຸດທ້າຍ. ອາແມນ.

## ບົດທີ 6

*ເຮືອຂອງຊາວຢາເຣັດຖືກລົມພັດໄປຫາ
ແຜ່ນດິນແຫ່ງຄຳສັນຍາ—ຜູ້ຄົນສັນລະ
ເສີນພຣະຜູ້ເປັນເຈົ້າສຳລັບພຣະກະລຸນາ
ທິຄຸນຂອງພຣະອົງ—ໂອໄຣຮາໄດ້ຖືກແຕ່ງ
ຕັ້ງໃຫ້ເປັນກະສັດປົກຄອງພວກເຂົາ—
ຢາເຣັດ ແລະ ນ້ອງຊາຍຂອງລາວໄດ້ສິ້ນ
ຊີວິດໄປ.*

1 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນເລີ່ມ
ຂຽນບັນທຶກຂອງຢາເຣັດ ແລະ ນ້ອງຊາຍ
ຂອງລາວຕໍ່ໄປ.
2 ເພາະເຫດການໄດ້ບັງເກີດຂຶ້ນຫລັງ
ຈາກພຣະຜູ້ເປັນເຈົ້າໄດ້ຕຽມ [ກ]ກ້ອນຫີນ
ເຫລົ່ານັ້ນ ຊຶ່ງນ້ອງຊາຍຂອງຢາເຣັດນຳຂຶ້ນ
ໄປເທິງພູເຂົາແລ້ວ, ນ້ອງຊາຍຂອງຢາເຣັດ
ໄດ້ລົງມາຈາກພູນັ້ນ, ແລະ ລາວໄດ້ເອົາ
ກ້ອນຫີນໃສ່ໄວ້ໃນພາຊະນະ ຊຶ່ງຕຽມໄວ້
ແລ້ວ, ກ້ອນໜຶ່ງໄວ້ແຕ່ລະສົ້ນຂອງເຮືອ;
ແລະ ຈົ່ງເບິ່ງ, ມັນໄດ້ໃຫ້ຄວາມສະຫວ່າງ
ແກ່ພາຊະນະເຫລົ່ານັ້ນ.
3 ແລະ ພຣະຜູ້ເປັນເຈົ້າຈຶ່ງໄດ້ເຮັດໃຫ້
ກ້ອນຫີນສ່ອງແສງໃນຄວາມມືດ, ເພື່ອໃຫ້
ຄວາມແຈ້ງແກ່ພວກຜູ້ຊາຍ, ພວກແມ່ຍິງ,
ແລະ ເດັກນ້ອຍ, ເພື່ອພວກເຂົາຈະບໍ່ໄດ້
ຂ້າມຜືນນ້ຳອັນກວ້າງໃຫຍ່ໃນຄວາມມືດ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ພວກເຂົາຕຽມອາຫານທຸກຢ່າງໄວ້ຮຽບຮ້ອຍ
ແລ້ວ ເພື່ອພວກເຂົາຈະໄດ້ດຳລົງຄົງຢູ່ໄດ້
ໃນທະເລນ້ຳນັ້ນ, ແລະ ອາຫານສຳລັບສັດ
ລ້ຽງ ແລະ ຝູງສັດໃຊ້ແຮງງານຂອງພວກ
ເຂົາ, ພ້ອມທັງສັດປ່າ ແລະ ນົກນາໆຊະ
ນິດ ທີ່ພວກເຂົາຄວນເອົາໄປນຳອີກ—ແລະ
ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກເຂົາ

2 *ກ* 2 ນຟ 27:12–14; ຄພ 5:9–15.
3 *ກ* 2 ນຟ 11:3; 27:12.
*ຂ* ຄພ 5:25.
*ຄ* ອທ 4:11.
4 *ກ* ເບິ່ງ ຄພ 17 ແລະ ຂໍ້ທີ 1–3; ເບິ່ງ “ປະຈັກພະຍານຂອງພະຍານສາມຄົນ” ນຳອີກ ໃນພາກໜ້າຕົ້ນຂອງພຣະຄຳພີມໍມອນ.
5 *ກ* ມມ 9:27; ມຣນ 10:30–32.
**6** 2 *ກ* ອທ 3:3–6.

ຈັດແຈງຮຽບຮ້ອຍແລ້ວ ພວກເຂົາໄດ້ລົງໄປ
ຫາພາຊະນະ ຫລື ເຮືອຂອງພວກເຂົາ ແລະ
ອອກທະເລໄປ, ໂດຍມອບຕົນໄວ້ກັບພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ອົງ
ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ເກີດ [ກ]ລົມແຮງ
ພັດຢູ່ເທິງໜ້ານ້ຳ ພັດໄປທາງແຜ່ນດິນແຫ່ງ
ຄຳສັນຍາ; ແລະ ພວກເຂົາຈຶ່ງຖືກລົມພັດຍູ້
ໄປເທິງຄື້ນຂອງທະເລດັ່ງນັ້ນ.
6 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາຖືກຝັງຢູ່ໃນຄວາມເລິກຂອງທະເລ
ຫລາຍເທື່ອ ຍ້ອນວ່າຟອງນ້ຳຂະໜາດ
ໃຫຍ່ ຊຶ່ງພັດພວກເຂົາ ແລະ ພະຍຸຝົນຟ້າ
ຄະນອງໃຫຍ່ ແລະ ຮ້າຍແຮງ ຊຶ່ງເກີດຂຶ້ນ
ຍ້ອນຄວາມຮ້າຍກາດຂອງລົມ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ພວກເຂົາຖືກຝັງຢູ່ໃນຄວາມເລິກຂອງ
ທະເລ ນ້ຳກໍເຮັດອັນຕະລາຍໃຫ້ພວກເຂົາ
ບໍ່ໄດ້ເລີຍ, ເພາະພາຊະນະຂອງພວກເຂົາ
ນັ້ນ [ກ]ແໜ້ນໜາຄືກັນກັບຊາມ, ແລະ ພວກ
ມັນແໜ້ນໜາຄືກັນກັບ [ຂ]ເຮືອຂອງໂນອາ;
ສະນັ້ນເວລາທີ່ພວກເຂົາຈົມລົງນ້ຳເລິກ
ພວກເຂົາກໍຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ,
ແລະ ພຣະອົງກໍໄດ້ນຳພວກເຂົາຂຶ້ນມາໜ້າ
ນ້ຳອີກ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ລົມບໍ່
ໄດ້ຢຸດພັດໄປທາງແຜ່ນດິນແຫ່ງຄຳສັນຍາ
ເລີຍໃນຂະນະທີ່ພວກເຂົາຢູ່ເທິງແຜ່ນນ້ຳ;
ແລະ ພວກເຂົາຈຶ່ງໄດ້ຖືກຍູ້ໄປທາງໜ້າລົມ
ນັ້ນ.
9 ແລະ ພວກເຂົາໄດ້ [ກ]ຮ້ອງສັນລະເສີນ
ພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ນ້ອງຊາຍ
ຂອງ ຢາເຣັດ ໄດ້ ຮ້ອງ ສັນ ລະ ເສີນ ພຣະ
ຜູ້ເປັນເຈົ້າໝົດມື້; ແລະ ລາວໄດ້ [ຂ]ຂອບ
ພຣະຄຸນ ແລະ ສັນລະເສີນພຣະຜູ້ເປັນເຈົ້າ
ຕະຫລອດທັງວັນ; ແລະ ເມື່ອຮອດຕອນ
ກາງຄືນ, ພວກເຂົາກໍບໍ່ໄດ້ຢຸດສັນລະເສີນ
ພຣະຜູ້ເປັນເຈົ້າ.
10 ແລະ ພວກເຂົາໄດ້ຖືກພັດໄປດັ່ງນັ້ນ;
ແລະ ບໍ່ມີຜີສາດທະເລຕົວໃດສາມາດທຳ
ລາຍພວກເຂົາໄດ້ເລີຍ, ທັງປາວານກໍເຮັດ
ໃຫ້ພວກເຂົາເສຍຫາຍບໍ່ໄດ້; ແລະ ພວກ
ເຂົາມີແສງສະຫວ່າງຢູ່ຕະຫລອດເວລາ
ເຖິງແມ່ນຈະຢູ່ເທິງນ້ຳ ຫລື ໃຕ້ນ້ຳ.
11 ແລະ ພວກເຂົາໄດ້ຖືກພັດໄປຢູ່ເທິງ
ໜ້ານ້ຳເປັນເວລາສາມຮ້ອຍສີ່ສິບສີ່ມື້.
12 ແລະ ພວກເຂົາໄດ້ຂຶ້ນຝັ່ງຂອງແຜ່ນ
ດິນແຫ່ງຄຳສັນຍາ. ແລະ ເວລາພວກເຂົາ
ກ້າວຕີນຂຶ້ນຝັ່ງຂອງແຜ່ນດິນແຫ່ງຄຳສັນ
ຍາແລ້ວ, ພວກເຂົາກໍກົ້ມຂາບລົງຢູ່ກັບພື້ນ
ດິນ, ແລະ ໄດ້ຖ່ອມຕົວຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າ, ແລະ ໄດ້ຫລັ່ງນ້ຳຕາ
ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, ເພາະ
ຄວາມສຸກຍ້ອນວ່າພຣະກະລຸນາທິຄຸນອັນ
ລົ້ນເຫລືອຂອງພຣະອົງທີ່ມີຕໍ່ພວກເຂົາ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ອອກໄປຕາມພື້ນແຜ່ນດິນ
ແລະ ເລີ່ມໄຖດິນ.
14 ແລະ ຢາເຣັດມີລູກຊາຍຢູ່ສີ່ຄົນ; ແລະ
ພວກເຂົາມີຊື່ວ່າ ຢາຄົມ, ແລະ ກຽອກາ,
ແລະ ເມຣາ, ແລະ ໂອໄຣຮາ.
15 ແລະ ນ້ອງຊາຍຂອງຢາເຣັດກໍມີລູກ
ຊາຍ ແລະ ລູກສາວຫລາຍຄົນຄືກັນ.
16 ແລະ [ກ]ໝູ່ເພື່ອນຂອງຢາເຣັດ ແລະ
ນ້ອງຊາຍຂອງລາວມີຈຳນວນປະມານ
ຊາວສອງຄົນ; ແລະ ພວກເຂົາເກີດລູກ

5 *ກ* ອທ 2:24–25.
7 *ກ* ອທ 2:17.
*ຂ* ປຖກ 6:14;
ມຊ 7:43.
9 *ກ* ຄມພ ຮ້ອງ.
*ຂ* 1 ຂຄ 16:7–9;
ແອວ 37:37;
ຄພ 46:32.
16 *ກ* ອທ 1:41.

ຊາຍ ແລະ ລູກສາວຫລາຍຄົນກ່ອນທີ່ຈະມາຮອດແຜ່ນດິນແຫ່ງຄຳສັນຍານີ້; ແລະ ສະນັ້ນພວກເຂົາຈຶ່ງເລີ່ມມີຈຳນວນຄົນຫລາຍຂຶ້ນ.

17 ແລະ ພວກເຂົາໄດ້ຮັບການສິດສອນໃຫ້ [ກ]ເດີນໄປຢ່າງຖ່ອມຕົວຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ; ແລະ ພວກເຂົາໄດ້ຮັບການ [ຂ]ສິດສອນຈາກເບື້ອງບົນນຳອີກ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາເລີ່ມແຜ່ຂະຫຍາຍອອກໄປທົ່ວແຜ່ນດິນ ແລະ ເພີ່ມທະວີຂຶ້ນ, ແລະ ໄດ້ໄຖດິນ; ແລະ ພວກເຂົາໄດ້ໝັ້ນຄົງຫລາຍຂຶ້ນໃນແຜ່ນດິນ.

19 ແລະ ນ້ອງຊາຍຂອງຢາເຣັດເລີ່ມເຖົ້າແກ່ລົງ, ແລະ ເຫັນວ່າໃນບໍ່ຊ້ານີ້ຕົນເອງກໍຈະຕ້ອງລົງໄປສູ່ຫລຸມຝັງສົບແລ້ວ; ດັ່ງນັ້ນລາວຈຶ່ງເວົ້າກັບຢາເຣັດວ່າ: ໃຫ້ພວກເຮົາເຕົ້າໂຮມຜູ້ຄົນຂອງພວກເຮົາ ເພື່ອພວກເຮົາຈະໄດ້ນັບຈຳນວນພວກເຂົາ, ເພື່ອພວກເຮົາຈະໄດ້ຮູ້ຈັກວ່າ ພວກເຂົາປາດຖະໜາອັນໃດຈາກພວກເຮົາກ່ອນທີ່ພວກເຮົາຈະລົງໄປສູ່ຫລຸມຝັງສົບ.

20 ແລະ ຜູ້ຄົນໄດ້ມາເຕົ້າໂຮມກັນຕາມນັ້ນ. ບັດນີ້ຈຳນວນລູກຊາຍ ແລະ ລູກສາວຂອງນ້ອງຊາຍຂອງຢາເຣັດມີຊາວສອງຄົນ; ແລະ ຈຳນວນລູກສາວ ແລະ ລູກຊາຍຂອງຢາເຣັດມີສິບສອງຄົນ, ລາວມີລູກຊາຍຢູ່ສີ່ຄົນ.

21 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຂົາເຈົ້າໄດ້ນັບຈຳນວນຜູ້ຄົນຂອງຕົນ; ແລະ ຫລັງຈາກເຂົາເຈົ້າໄດ້ນັບຈຳນວນແລ້ວ, ເຂົາເຈົ້າໄດ້ສອບຖາມເຖິງຄວາມປາດຖະໜາຂອງພວກເຂົາວ່າ ພວກເຂົາປາດຖະໜາໃຫ້ເຂົາເຈົ້າເຮັດຫຍັງໃຫ້ພວກເຂົາກ່ອນທີ່ເຂົາເຈົ້າຈະລົງໄປສູ່ຫລຸມຝັງສົບ.

22 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນປາດຖະໜາຢາກໃຫ້ເຂົາເຈົ້າ [ກ]ເຈີມລູກຊາຍຄົນໜຶ່ງຂອງເຂົາເຈົ້າໃຫ້ເປັນກະສັດປົກຄອງພວກເຂົາ.

23 ແລະ ບັດນີ້ຈົ່ງເບິ່ງ, ນີ້ເປັນການໂສກເສົ້າຫລາຍສຳລັບເຂົາເຈົ້າ. ແລະ ນ້ອງຊາຍຂອງຢາເຣັດໄດ້ເວົ້າກັບຜູ້ຄົນເຫລົ່ານັ້ນວ່າ: ສິ່ງນີ້ຈະ [ກ]ນຳໄປສູ່ການເປັນຊະເລີຍຢ່າງແນ່ນອນ.

24 ແຕ່ວ່າຢາເຣັດໄດ້ເວົ້າກັບນ້ອງຊາຍວ່າ: ຈົ່ງປ່ອຍໃຫ້ພວກເຂົາມີກະສັດເສຍ. ແລະ ສະນັ້ນ ລາວຈຶ່ງໄດ້ເວົ້າກັບພວກເຂົາວ່າ: ພວກເຈົ້າຈົ່ງເລືອກເອົາກະສັດຈາກບັນດາລູກຊາຍຂອງພວກເຮົາຜູ້ທີ່ພວກເຈົ້າພໍໃຈ.

25 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ເລືອກເອົາລູກກົກຂອງນ້ອງຊາຍຂອງຢາເຣັດ ຜູ້ທີ່ມີຊື່ວ່າ ເພແກັກ. ແລະ ເຫດການໄດ້ບັງເກີດຂຶ້ນຄື ເພແກັກປະຕິເສດ ແລະ ບໍ່ຍອມເປັນກະສັດຂອງພວກເຂົາ. ແລະ ຜູ້ຄົນຢາກໃຫ້ບິດາຂອງລາວບັງຄັບລາວໃຫ້ເປັນ, ແຕ່ບິດາຂອງລາວບໍ່ຍອມ; ແລະ ລາວໄດ້ບອກພວກເຂົາວ່າ ບໍ່ຄວນບັງຄັບຜູ້ໃດໃຫ້ເປັນກະສັດຂອງພວກເຂົາ.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ເລືອກເອົານ້ອງຊາຍທັງໝົດຂອງເພແກັກ, ແຕ່ບໍ່ມີຜູ້ໃດຍອມຮັບ.

27 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກລູກຊາຍຂອງຢາເຣັດກໍບໍ່ຍອມຈັກຄົນນອກຈາກຜູ້ດຽວເທົ່ານັ້ນ; ແລະ ໂອໄຮຮາ

17 ກ ຄມພ ເດີນ, ເດີນໄປກັບພຣະເຈົ້າ.
ຂ ຄມພ ເປີດເຜີຍ, ການເປີດເຜີຍ.
22 ກ ຄມພ ເຈີມ, ການເຈີມ.
23 ກ 1 ຊມອ 8:10–18; ມຊຢ 29:16–23.

ກໍໄດ້ຮັບການແຕ່ງຕັ້ງໃຫ້ເປັນກະສັດປົກ
ຄອງຜູ້ຄົນ.
28 ແລະ ລາວໄດ້ເລີ່ມປົກຄອງ ແລະ ຜູ້
ຄົນກໍເລີ່ມຈະເລີນຮຸ່ງເຮືອງຂຶ້ນ ແລະ ພວກ
ເຂົາກັບມາເປັນຄົນຮັ່ງມີເປັນດີຢ່າງຍິ່ງ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຢາເຣັດໄດ້ສິ້ນຊີວິດໄປ, ແລະ ນ້ອງຊາຍ
ຂອງລາວກໍຄືກັນ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂອ
ໄຮຣາໄດ້ເດີນໄປຢ່າງຖ່ອມຕົວຕໍ່ພຣະພັກ
ຂອງພຣະຜູ້ເປັນເຈົ້າ, ແລະ ໄດ້ຈື່ຈຳສິ່ງທີ່
ຍິ່ງໃຫຍ່ຊຶ່ງພຣະຜູ້ເປັນເຈົ້າໄດ້ເຮັດເພື່ອ
ບິດາຂອງລາວ, ແລະ ລາວໄດ້ສິດສອນຜູ້
ຄົນຂອງລາວອີກວ່າ ພຣະຜູ້ເປັນເຈົ້າໄດ້
ເຮັດສິ່ງທີ່ຍິ່ງໃຫຍ່ແນວໃດເພື່ອບັນພະບຸ
ລຸດຂອງພວກເຂົາ.

## ບົດທີ 7

*ໂອໄຮຣາປົກຄອງດ້ວຍຄວາມຊອບທຳ—ທ່າມກາງການຍຶດອຳນາດ ແລະ ການຜິດຖຽງກັນ, ການຊີງດີຊີງເດັ່ນໃນອານາຈັກຂອງຊູນ ແລະ ໂຄຮໍເລີ່ມເກີດຂຶ້ນ—ສາດສະດາປະນາມຄວາມຊົ່ວຮ້າຍ ແລະ ການນັບຖືຮູບບູຊາຂອງຜູ້ຄົນ, ຊຶ່ງຈາກນັ້ນພວກເຂົາກໍໄດ້ກັບໃຈ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂອ
ໄຮຣາໄດ້ດຳເນີນການຕັດສິນໃນແຜ່ນດິນ
ດ້ວຍຄວາມຍຸດຕິທຳຕະຫລອດວັນເວລາ
ຂອງລາວ ຊຶ່ງມີຢູ່ຢ່າງຍາວນານ.
2 ແລະ ລາວໄດ້ມີລູກຊາຍ ແລະ ລູກ
ສາວຫລາຍຄົນ; ແທ້ຈິງແລ້ວ, ລາວມີລູກ
ທັງໝົດສາມສິບເອັດຄົນ, ຊຶ່ງໃນຈຳນວນນີ້
ເປັນລູກຊາຍຊາວສາມຄົນ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ມີລູກອີກຜູ້ໜຶ່ງຊື່ຄິບໃນໄວຊະລາຂອງ
ລາວ. ແລະ ເຫດການໄດ້ບັງເກີດຂຶ້ນຄື ຄິບ
ໄດ້ປົກຄອງແທນ; ແລະ ຄິບໄດ້ມີລູກຊາຍຊື່
ວ່າ ໂຄຣິຮໍ.
4 ແລະ ເວລາໂຄຣິຮໍມີອາຍຸໄດ້ສາມສິບ
ສອງປີ ລາວໄດ້ກະບົດຕໍ່ບິດາຂອງຕົນ,
ແລະ ໄດ້ຂ້າມໄປຫາແຜ່ນດິນນີຮໍ; ແລະ
ລາວໄດ້ມີລູກຊາຍ ແລະ ລູກສາວຫລາຍ
ຄົນ, ແລະ ພວກເຂົາເປັນຄົນຈົບງາມທີ່
ສຸດ; ດັ່ງນັ້ນ ໂຄຣິຮໍຈຶ່ງໄດ້ດຶງເອົາຜູ້ຄົນຢ່າງ
ຫລວງຫລາຍມາຢູ່ກັບລາວ.
5 ແລະ ເວລາລາວເຕົ້າໂຮມກຳລັງທັບ
ໄດ້ແລ້ວ ລາວຈຶ່ງຂຶ້ນມາຫາແຜ່ນດິນໂມຣັນ
ບ່ອນທີ່ກະສັດຢູ່ ແລະ ໄດ້ຈັບເອົາກະສັດ
ໄປເປັນຊະເລີຍ ຊຶ່ງເຮັດໃຫ້ [ກ]ຄຳເວົ້າຂອງ
ນ້ອງຊາຍຂອງຢາເຣັດເກີດເປັນຈິງທີ່ວ່າ
ພວກເຂົາຈະຖືກນຳໄປສູ່ການເປັນຊະ
ເລີຍ.
6 ບັດນີ້ແຜ່ນດິນໂມຣັນບ່ອນທີ່ກະສັດຢູ່
ໄດ້ຕັ້ງຢູ່ໃກ້ກັບແຜ່ນດິນ ຊຶ່ງຊາວນີໄຟເອີ້ນ
ວ່າ ແຜ່ນດິນຮ້າງ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄິບ
ກັບຜູ້ຄົນຂອງລາວຖືກກວາດໄປເປັນຊະ
ເລີຍຂອງໂຄຣິຮໍ ຜູ້ເປັນລູກຊາຍຂອງຕົນ,
ຈົນວ່າຄິບເຖົ້າແກ່ຫລາຍແລ້ວ; ເຖິງຢ່າງ
ໃດກໍຕາມ ໃນໄວຊະລາຂອງລາວ, ລາວ
ຍັງໄດ້ລູກຊາຍອີກຊື່ວ່າ ຊູນ ຂະນະທີ່ລາວ
ເປັນຊະເລີຍ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊູນ
ຄຽດແຄ້ນໃຫ້ອ້າຍຂອງຕົນ, ແລະ ຊູນແຂງ
ແຮງຂຶ້ນ, ແລະ ກັບມາມີກຳລັງຫລາຍຕາມ
ກຳລັງຂອງມະນຸດ; ແລະ ລາວກໍຍິ່ງໃຫຍ່
ໃນການຕັດສິນນຳອີກ.

**7** 5 *ກ* ອທ 6:23.

9 ດັ່ງນັ້ນ, ລາວຈຶ່ງມາຫາເນີນພູເອຟະຣາອິມ, ແລະ ລາວໄດ້ຫລອມແຮ່ຈາກເນີນພູນັ້ນ, ແລະ ໄດ້ເຮັດດາບດ້ວຍເຫລັກໃຫ້ຜູ້ທີ່ລາວດຶງມາຫາລາວ; ແລະ ຫລັງຈາກລາວໄດ້ເອົາດາບໃຫ້ພວກເຂົາເປັນອາວຸດແລ້ວ, ລາວກໍກັບຄືນໄປຫາເມືອງນີຮໍ, ແລະ ໄດ້ສູ້ຮົບກັບໂຄຣິຮໍອ້າຍຂອງຕົນ, ໂດຍວິທີນີ້ລາວຈຶ່ງໄດ້ຍຶດເອົາອານາຈັກຄືນມາໃຫ້ຄີບບິດາຂອງລາວ.

10 ແລະ ບັດນີ້ຍ້ອນວ່າຜົນງານທີ່ຊູນເຮັດໄປນັ້ນ, ບິດາຂອງລາວຈຶ່ງໄດ້ມອບອານາຈັກໃຫ້ລາວ; ສະນັ້ນ ລາວຈຶ່ງໄດ້ເລີ່ມປົກຄອງແທນບິດາຂອງລາວ.

11 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ດຳເນີນການຕັດສິນດ້ວຍຄວາມຊອບທຳ; ແລະ ລາວໄດ້ແຜ່ອານາຈັກຂອງລາວອອກໄປທົ່ວຜືນແຜ່ນດິນ, ເພາະວ່າຜູ້ຄົນກັບມາມີຈຳນວນຢ່າງຫລວງຫລາຍ.

12 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊູນໄດ້ມີລູກຊາຍ ແລະ ລູກສາວຫລາຍຄົນຄືກັນ.

13 ແລະ ໂຄຣິຮໍໄດ້ກັບໃຈຈາກຄວາມຊົ່ວຫລາຍຢ່າງຊຶ່ງລາວໄດ້ເຮັດໄປນັ້ນ; ດັ່ງນັ້ນ ຊູນຈຶ່ງໄດ້ໃຫ້ລາວມີອຳນາດໃນອານາຈັກຂອງຕົນ.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິຮໍມີລູກຊາຍ ແລະ ລູກສາວຫລາຍຄົນ. ແລະ ໃນບັນດາພວກລູກຊາຍຂອງໂຄຣິຮໍມີຜູ້ໜຶ່ງຊື່ວ່າ ໂນອາ.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂນອາໄດ້ກະບົດຕໍ່ກະສັດຊູນ, ແລະ ຕໍ່ໂຄຣິຮໍບິດາຂອງຕົນ, ແລະ ໄດ້ດຶງເອົາໂຄຣໍນ້ອງຊາຍຂອງລາວ, ແລະ ອ້າຍນ້ອງຂອງຕົນທັງໝົດ ແລະ ຜູ້ຄົນຢ່າງຫລວງຫລາຍໄປນຳ.

16 ແລະ ລາວໄດ້ມາສູ້ຮົບກັບກະສັດຊູນ, ດ້ວຍເຫດນີ້ລາວຈຶ່ງໄດ້ຮັບແຜ່ນດິນມູນມໍລະດົກບ່ອນທຳອິດຂອງພວກເຂົາ; ແລະ ລາວໄດ້ກາຍມາເປັນກະສັດປົກຄອງແຜ່ນດິນສ່ວນນັ້ນ.

17 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ສູ້ຮົບກັບກະສັດຊູນອີກ; ແລະ ລາວໄດ້ຈັບກະສັດຊູນ, ແລະ ເອົາໄປເປັນຊະເລີຍໃນແຜ່ນດິນໂມຣັນ.

18 ແລະ ເຫດການໄດ້ບັງເກີດຂຶ້ນ ເມື່ອໃກ້ເວລາທີ່ລາວຈະປະຫານຊີວິດຊູນ, ພວກລູກຊາຍຂອງຊູນໄດ້ລອບເຂົ້າໄປໃນເຮືອນຂອງໂນອາໃນຕອນກາງຄືນ, ແລະ ໄດ້ຂ້າລາວ ແລະ ໄດ້ມ້າງປະຕູຄຸກ, ແລະ ນຳເອົາບິດາຂອງພວກເຂົາອອກມາ ແລະ ໄດ້ນຳຊູນກັບຄືນໄປປົກຄອງອານາຈັກຂອງຕົນຄືເກົ່າ.

19 ດັ່ງນັ້ນ, ລູກຊາຍຂອງໂນອາຈຶ່ງໄດ້ເລີ່ມສ້າງອານາຈັກຂຶ້ນແທນລາວ; ເຖິງຢ່າງໃດກໍຕາມ ພວກເຂົາກໍບໍ່ມີອຳນາດເໜືອກະສັດຊູນອີກຕໍ່ໄປ, ແລະ ຜູ້ຄົນທີ່ຢູ່ພາຍໃຕ້ການປົກຄອງຂອງກະສັດຊູນໄດ້ຈະເລີນຮຸ່ງເຮືອງຢ່າງຍິ່ງ ແລະ ຍິ່ງໃຫຍ່ຂຶ້ນຫລາຍທີ່ສຸດ.

20 ແລະ ປະເທດຖືກແຍກອອກໄປ ແລະ ມັນມີຢູ່ສອງອານາຈັກຄື ອານາຈັກຂອງຊູນ, ແລະ ອານາຈັກຂອງໂຄຮໍລູກຊາຍຂອງໂນອາ.

21 ແລະ ໂຄຮໍລູກຊາຍຂອງໂນອາໄດ້ໃຫ້ຜູ້ຄົນຂອງຕົນໄປຕໍ່ສູ້ກັບຊູນ, ຊຶ່ງໃນການສູ້ຮົບນີ້ຊູນໄດ້ຮັບໄຊຊະນະ ແລະ ໄດ້ປະຫານຊີວິດໂຄຮໍ.

22 ແລະ ບັດນີ້ໂຄຮໍ ມີລູກຊາຍຄົນໜຶ່ງຊື່ວ່າ ນິມໂຣດ; ແລະ ນິມໂຣດໄດ້ຍົກອານາຈັກຂອງໂຄຮໍໃຫ້ຊູນ, ແລະ ລາວເປັນທີ່ພໍໃຈໃນສາຍຕາຂອງຊູນ; ດັ່ງນັ້ນ ຊູນຈຶ່ງໄດ້ໃຫ້ຄວາມຊ່ວຍເຫລືອອັນສຳຄັນແກ່ລາວ,

ແລະ ລາວຈຶ່ງໄດ້ເຮັດຕາມໃຈຊອບຢູ່ໃນອານາຈັກຂອງຊູນ.

23 ແລະ ໃນສະໄໝການປົກຄອງຂອງຊູນນີ້ ກໍມີສາດສະດາຈຳນວນໜຶ່ງ, ຊຶ່ງພຣະຜູ້ເປັນເຈົ້າໄດ້ສົ່ງມາໃນບັນດາຜູ້ຄົນອີກ, ໂດຍໄດ້ທຳນາຍວ່າ ຄວາມຊົ່ວຮ້າຍ ແລະ ການນັບຖື [ກ]ຮູບບູຊາຂອງຜູ້ຄົນນັ້ນກຳລັງຈະນຳເອົາການສາບແຊ່ງມາໃຫ້ແຜ່ນດິນ, ແລະ ພວກເຂົາຈະຖືກທຳລາຍຖ້າຫາກພວກເຂົາບໍ່ກັບໃຈ.

24 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໄດ້ໝິ່ນປະໝາດສາດສະດາ, ແລະ ໄດ້ເຍາະເຍີ້ຍພວກເພິ່ນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດຊູນໄດ້ລົງໂທດຜູ້ຄົນທັງໝົດທີ່ໝິ່ນປະໝາດສາດສະດາ.

25 ແລະ ລາວໄດ້ອອກກົດໝາຍໄປທົ່ວແຜ່ນດິນ, ຊຶ່ງໃຫ້ອຳນາດແກ່ສາດສະດາເພື່ອຈະສາມາດໄປຫາບ່ອນໃດກໍຕາມແລ້ວແຕ່ພວກເພິ່ນຕ້ອງການ; ແລະ ດ້ວຍເຫດນີ້ ຜູ້ຄົນຈຶ່ງຖືກນຳມາສູ່ການກັບໃຈ.

26 ແລະ ຍ້ອນວ່າຜູ້ຄົນໄດ້ກັບໃຈຈາກຄວາມຊົ່ວຮ້າຍ ແລະ ປະຖິ້ມການນັບຖືຮູບບູຊາຂອງພວກເຂົາ, ແລະ ພຣະເຈົ້າຈຶ່ງໄດ້ຍົກເວັ້ນພວກເຂົາ, ແລະ ພວກເຂົາຈຶ່ງເລີ່ມຈະເລີນຮຸ່ງເຮືອງຂຶ້ນອີກໃນແຜ່ນດິນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ຊູນໄດ້ມີລູກຊາຍ ແລະ ລູກສາວຫລາຍຄົນໃນໄວຊະລາຂອງລາວ.

27 ແລະ ມັນບໍ່ມີສົງຄາມອີກໃນວັນເວລາຂອງຊູນ; ແລະ ລາວໄດ້ລະນຶກເຖິງສິ່ງສຳຄັນທີ່ພຣະຜູ້ເປັນເຈົ້າ ໄດ້ເຮັດເພື່ອບັນພະບຸລຸດຂອງລາວໃນການນຳເອົາພວກເຂົາ [ກ]ຂ້າມຄວາມເລິກທີ່ສຸດຂອງທະເລມາຫາແຜ່ນດິນແຫ່ງຄຳສັນຍາ; ດັ່ງນັ້ນ ລາວຈຶ່ງໄດ້ດຳເນີນການຕັດສິນດ້ວຍຄວາມຍຸດຕິທຳຕະຫລອດວັນເວລາຂອງລາວ.

## ບົດທີ 8

*ມັນມີການຜິດຖຽງກັນ ແລະ ມີການຂັດແຍ້ງກັນເລື່ອງອານາຈັກ—ເອຄິດຈັດຕັ້ງຄຳສາບານການມົ້ວສຸມລັບເພື່ອປະຫານຊີວິດກະສັດ—ການມົ້ວສຸມລັບເປັນຂອງມານ ແລະ ຜົນຄືການທຳລາຍປະຊາຊາດ—ຄົນຕ່າງຊາດໃນສະໄໝປະຈຸບັນຖືກເຕືອນໃຫ້ຕໍ່ຕ້ານການມົ້ວສຸມລັບຊຶ່ງພະຍາຍາມໂຄ່ນລົ້ມອິດສະລະພາບຂອງແຜ່ນດິນ, ປະຊາຊາດ, ແລະ ປະເທດຊາດທັງໝົດ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊູນໄດ້ລູກຊາຍອີກຄົນໜຶ່ງຊື່ວ່າ ໂອເມ, ແລະ ໂອເມໄດ້ປົກຄອງແທນລາວ. ແລະ ໂອເມໄດ້ມີລູກຊາຍຊື່ວ່າ ຢາເຣັດ; ແລະ ຢາເຣັດໄດ້ມີລູກຊາຍ ແລະ ລູກສາວຫລາຍຄົນ.

2 ແລະ ຢາເຣັດໄດ້ກະບົດຕໍ່ບິດາຂອງຕົນ, ແລະ ມາຢູ່ໃນແຜ່ນດິນຂອງເຫັດ. ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ເວົ້າຍ້ອງຍໍຜູ້ຄົນຢ່າງຫລວງຫລາຍ, ຍ້ອນວ່າຄຳເວົ້າອັນມີເລ່ຫລ່ຽມຂອງລາວຈົນວ່າລາວໄດ້ອານາຈັກເຄິ່ງໜຶ່ງມາປົກຄອງ.

3 ແລະ ເມື່ອລາວໄດ້ອານາຈັກມາເຄິ່ງໜຶ່ງແລ້ວ, ລາວກໍໄດ້ມາສູ້ຮົບກັບບິດາຂອງຕົນ, ແລະ ລາວໄດ້ຈັບເອົາບິດາຂອງຕົນໄປເປັນຊະເລີຍ, ແລະ ເຮັດໃຫ້ບິດາຂອງຕົນທຳງານໃນຂະນະທີ່ເປັນຊະເລີຍ;

4 ແລະ ບັດນີ້, ໃນໄລຍະເວລາແຫ່ງການປົກຄອງຂອງໂອເມ, ລາວໄດ້ຕົກຢູ່ໃນຄວາມເປັນຊະເລີຍເຄິ່ງໜຶ່ງຂອງຊີວິດຂອງລາວ. ແລະ ເຫດການໄດ້ບັງເກີດຂຶ້ນ

23 *ກ* ຄມພ ການນັບຖືຮູບບູຊາ.

27 *ກ* ອທ 6:4, 12.

ຄື ລາວໄດ້ມີລູກຊາຍ ແລະ ລູກສາວຫລາຍ ຄົນ, ຊຶ່ງໃນບັນດາລູກພວກນີ້ ມີສອງຄົນຊື່ ວ່າ ເອຊະໂຣມ ແລະ ໂຄຣິອານທະເມີ.

5 ແລະ ພວກເຂົາຄຽດແຄ້ນຫລາຍທີ່ສຸດ ຍ້ອນການກະທຳຂອງຢາເຣັດອ້າຍຂອງ ຕົນ, ເຖິງຂະໜາດທີ່ພວກເຂົາໄດ້ຈັດກອງ ທັບ ແລະ ໄດ້ສູ້ຮົບກັບຢາເຣັດ. ແລະ ເຫດ ການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ສູ້ຮົບ ກັບຢາເຣັດໃນເວລາກາງຄືນ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ ພວກເຂົາໄດ້ຂ້າຄົນໃນກອງທັບຂອງ ຢາເຣັດແລ້ວ ແລະ ກຳລັງຈະຂ້າລາວນຳ ອີກ; ແລະ ລາວໄດ້ວິງວອນພວກເຂົາໃຫ້ ໄວ້ຊີວິດລາວ, ແລະ ລາວຈະຍົກອານາຈັກ ຄືນໃຫ້ບິດາຂອງຕົນ. ແລະ ເຫດການໄດ້ ບັງເກີດຂຶ້ນຄື ພວກເຂົາໄດ້ໄວ້ຊີວິດລາວ.

7 ແລະ ບັດນີ້ຢາເຣັດໄດ້ມີຄວາມເສົ້າສະ ຫລົດໃຈຫລາຍທີ່ສຸດ ຍ້ອນການສູນເສຍ ອານາຈັກໄປນັ້ນ, ເພາະວ່າໃຈຂອງລາວ ຢູ່ກັບອານາຈັກ ແລະ ການຍ້ອງຍໍສັນລະ ເສີນຂອງໂລກ.

8 ບັດນີ້ໂດຍທີ່ລູກສາວຂອງຢາເຣັດເປັນ ຄົນຊຳນິຊຳນານທີ່ສຸດ, ແລະ ໂດຍທີ່ໄດ້ ເຫັນຄວາມເສົ້າສະຫລົດໃຈຂອງບິດາຕົນ, ນາງຈຶ່ງໄດ້ຄິດວາງແຜນເພື່ອຈະກູ້ເອົາອາ ນາຈັກຄືນມາໃຫ້ບິດາຂອງນາງໃຫ້ໄດ້.

9 ບັດນີ້ລູກສາວຂອງຢາເຣັດເປັນຄົນ ງາມທີ່ສຸດ. ແລະ ເຫດການໄດ້ບັງເກີດຂຶ້ນ ຄື ນາງໄດ້ເວົ້າກັບບິດາຂອງນາງວ່າ: ແມ່ນ ຫຍັງທີ່ເຮັດໃຫ້ພໍ່ມີຄວາມເສົ້າສະຫລົດໃຈ ເຊັ່ນນີ້? ພໍ່ບໍ່ໄດ້ອ່ານບັນທຶກຊຶ່ງບັນພະບຸ ລຸດຂອງພວກເຮົານຳຂ້າມຄວາມເລິກທີ່ ສຸດຂອງທະເລອັນກວ້າງໃຫຍ່ມາບໍ? ຈົ່ງ ເບິ່ງ, ມັນບໍ່ມີເລື່ອງລາວກ່ຽວກັບຄົນໃນສະ ໄໝກ່ອນບໍທີ່ໃຊ້ແຜນການ [ກ]ລັບຂອງພວກ ເຂົາ, ຊຶ່ງໃນແຜນການນັ້ນພວກເຂົາໄດ້ຍຶດ ເອົາອານາຈັກຫລາຍແຫ່ງ ແລະ ມີຄວາມ ຮຸ່ງເຮືອງເຫລືອງເຫລື້ອມ?

10 ແລະ ບັດນີ້, ສະນັ້ນ, ຂໍໃຫ້ພໍ່ຈົ່ງໃຫ້ ຄົນໄປນຳເອົາເອຄິດລູກຊາຍຂອງຄິມນໍ ມາ; ແລະ ຈົ່ງເບິ່ງ, ລູກເອງເປັນຄົນງາມ, ແລະ ລູກຈະ [ກ]ຟ້ອນລຳຕໍ່ໜ້າລາວ, ແລະ ລູກຈະເຮັດໃຫ້ລາວພໍໃຈ, ຈົນວ່າລາວຢາກ ໄດ້ລູກໄປເປັນພັນລະຍາຂອງລາວ; ດັ່ງນັ້ນ ຖ້າຫາກລາວປາດຖະໜາຈາກພໍ່ວ່າໃຫ້ພໍ່ ຍົກລູກໃຫ້ເປັນພັນລະຍາຂອງລາວ, ເມື່ອ ນັ້ນພໍ່ຈົ່ງກ່າວວ່າ: ຂ້າພະເຈົ້າຈະຍົກນາງ ໃຫ້ທ່ານ ຖ້າຫາກທ່ານເອົາຫົວບິດາຂອງ ຂ້າພະເຈົ້າ, ຜູ້ເປັນກະສັດມາໃຫ້ຂ້າພະ ເຈົ້າ.

11 ແລະ ບັດນີ້ໂອເມ ແມ່ນເພື່ອນຂອງ ເອຄິດ; ດັ່ງນັ້ນ, ເມື່ອຢາເຣັດໄດ້ສັ່ງໃຫ້ ຄົນໄປເອີ້ນເອຄິດມາຫາ, ລູກສາວຂອງ ຢາເຣັດກໍໄດ້ຟ້ອນລຳຕໍ່ໜ້າລາວ, ເຖິງຂະ ໜາດທີ່ເຮັດໃຫ້ລາວພໍໃຈ, ເຖິງຂະໜາດທີ່ ລາວຢາກໄດ້ນາງມາເປັນພັນລະຍາ. ແລະ ເຫດການໄດ້ບັງເກີດຂຶ້ນຄື ເອຄິດໄດ້ເວົ້າ ກັບຢາເຣັດວ່າ: ໃຫ້ນາງມາເປັນພັນລະຍາ ຂອງຂ້າພະເຈົ້າສາ.

12 ແລະ ຢາເຣັດເວົ້າກັບລາວວ່າ: ຂ້າພະ ເຈົ້າຈະຍົກນາງໃຫ້ທ່ານ, ຖ້າຫາກທ່ານຈະ ເອົາຫົວຂອງບິດາຂອງຂ້າພະເຈົ້າຜູ້ເປັນ ກະສັດມາໃຫ້ຂ້າພະເຈົ້າ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ເອ ຄິດໄດ້ເຕົ້າໂຮມຍາດພີ່ນ້ອງທັງໝົດຂອງ ຕົນໃນຄອບຄົວຂອງຢາເຣັດ ແລະ ໄດ້ເວົ້າ ກັບພວກເຂົາເຫລົ່ານັ້ນວ່າ: ພວກທ່ານຈະ ສາບານກັບຂ້າພະເຈົ້າໄດ້ບໍວ່າ ພວກທ່ານ

**8** 9*ກ* ຮລມ 6:26–30;
3 ນຟ 6:28;
ມຊ 5:51–52.
10*ກ* ມຣກ 6:22–28.

ຈະຊື່ສັດຕໍ່ຂ້າພະເຈົ້າໃນສິ່ງທີ່ຂ້າພະເຈົ້າ
ປາດຖະໜາຈາກພວກທ່ານ?
14 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກ ເຂົາທັງໝົດໄດ້ [ກ]ສາບານກັບລາວ,
ໂດຍ ອ້າງເຖິງ ພຣະ ເຈົ້າ ແຫ່ງສະຫວັນ,
ແລະ ອ້າງເຖິງຟ້າສະຫວັນນຳອີກ, ແລະ
ອ້າງເຖິງແຜ່ນດິນໂລກນຳອີກ, ແລະ ອ້າງ
ວ່າຖ້າຫາກຜູ້ໃດຫັນປ່ຽນບໍ່ປະຕິບັດຕາມ
ສິ່ງທີ່ເອຄິດປາດຖະໜາ ຜູ້ນັ້ນຈະສູນເສຍ
ຫົວຂອງຕົນ; ແລະ ຜູ້ໃດທີ່ເປີດເຜີຍອັນໃດ
ກໍຕາມທີ່ເອຄິດບອກໃຫ້ຕົນຮູ້, ຜູ້ນັ້ນຈະສູນ
ເສຍຊີວິດຂອງຕົນ.
15 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ພວກເຂົາໄດ້ເຫັນດີກັບເອຄິດດັ່ງນັ້ນ. ແລະ
ເອຄິດໄດ້ໃຫ້ພວກເຂົາກ່າວ [ກ]ຄຳສາບານ
ຊຶ່ງ ມອບ ໃຫ້ ຄົນ ໃນ ສະໄໝ ບູຮານ ຜູ້ ທີ່
ສະແຫວງຫາອຳນາດ, ຊຶ່ງຕໍ່ກັນມາຈາກ
[ຂ]ກາອິນຜູ້ເປັນຄາດຕະກອນນັບຕັ້ງແຕ່
ການເລີ່ມຕົ້ນມາ.
16 ແລະ ອຳນາດຂອງມານໄດ້ຮັກສາຄຳ
ສາບານນີ້ໄວ້ ເພື່ອຈະໄດ້ມອບຄຳສາບານ
ເຫລົ່ານີ້ໃຫ້ແກ່ຜູ້ຄົນຕໍ່ໄປ, ເພື່ອໃຫ້ພວກ
ເຂົາຄົງຢູ່ໃນຄວາມມືດ, ເພື່ອຊ່ວຍເຫລືອ
ຜູ້ທີ່ສະແຫວງຫາອຳນາດໃຫ້ມີອຳນາດ,
ແລະ ເພື່ອຂ້າ, ແລະ ເພື່ອປຸ້ນຈີ້, ແລະ ເພື່ອ
ຕົວະຍົວະ, ແລະ ເພື່ອເຮັດຄວາມຊົ່ວຮ້າຍ
ນາໆປະການ ແລະ ການໂສເພນີ.
17 ແລະ ແມ່ນລູກສາວຂອງຢາເຣັດນີ້
ແຫລະທີ່ໄດ້ນຳມັນມາໄວ້ໃນໃຈຂອງລາວ
ເພື່ອໃຫ້ຄົ້ນຄວ້າຫາສິ່ງເກົ່າແກ່ເຫລົ່ານີ້;
ແລະ ຢາເຣັດໄດ້ນຳມັນມາໄວ້ໃນໃຈຂອງ
ເອຄິດ; ດັ່ງນັ້ນ ເອຄິດຈຶ່ງໄດ້ມອບມັນໃຫ້ແກ່
ຍາດພີ່ນ້ອງ ແລະ ໝູ່ເພື່ອນຂອງລາວ, ແລະ
ນຳພວກເຂົາໄປດ້ວຍຄຳສັນຍາທີ່ຈັບງາມ
ໃຫ້ເຮັດສິ່ງໃດກໍຕາມທີ່ລາວປາດຖະໜາ.
18 ແລະ ເຫດການ ໄດ້ ບັງ ເກີດຂຶ້ນຄື
ພວກເຂົາໄດ້ຈັດຕັ້ງ [ກ]ການມົ້ວສຸມລັບຂຶ້ນ,
ຄືກັນກັບໃນສະໄໝກ່ອນ; ຊຶ່ງການມົ້ວສຸມ
ລັບນັ້ນເປັນໜ້າກຽດຊັງ ແລະ ຊົ່ວຮ້າຍຍິ່ງ
ກວ່າສິ່ງໃດໆ, ໃນສາຍພຣະເນດຂອງພຣະ
ເຈົ້າ;
19 ເພາະວ່າພຣະຜູ້ເປັນເຈົ້າບໍ່ໄດ້ເຮັດ
ວຽກໃນການມົ້ວສຸມລັບ, ທັງພຣະອົງບໍ່ມີ
ພຣະປະສົງໃຫ້ມະນຸດຂ້າຟັນກັນ, ແຕ່ໃນ
ທຸກສິ່ງພຣະອົງຊົງຫ້າມມັນນັບຕັ້ງແຕ່ການ
ເລີ່ມຕົ້ນຂອງມະນຸດເປັນຕົ້ນມາ.
20 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນບໍ່
ໄດ້ຂຽນແບບສະບັບຂອງຄຳສາບານ ແລະ
ການມົ້ວສຸມລັບຂອງພວກເຂົາໄວ້, ເພາະ
ມັນເປັນທີ່ຮູ້ຈັກແກ່ຂ້າພະເຈົ້າວ່າ ມັນມີຢູ່
ແລ້ວກັບຄົນທັງປວງ, ແລະ ມັນມີຢູ່ແລ້ວ
ໃນບັນດາຊາວເລມັນ.
21 ແລະ ມັນເປັນເຫດໃຫ້ເກີດ [ກ]ຄວາມ
ພິນາດແກ່ຜູ້ຄົນພວກນີ້ ຊຶ່ງຂ້າພະເຈົ້າກຳ
ລັງເວົ້າເຖິງຢູ່ດຽວນີ້, ແລະ ມັນນຳຄວາມ
ພິນາດມາໃຫ້ຜູ້ຄົນຂອງນີໄຟນຳອີກ.
22 ແລະ ປະຊາຊາດໃດກໍຕາມທີ່ຈະສະ
ໜັບສະໜູນການມົ້ວສຸມລັບແບບນີ້, ເພື່ອ
ໃຫ້ໄດ້ອຳນາດ ແລະ ຜົນປະໂຫຍດຈົນໃຫ້
ມັນແຜ່ຂະຫຍາຍໄປທົ່ວປະຊາຊາດ; ຈົ່ງ
ເບິ່ງ, ປະຊາຊາດນັ້ນຈະຖືກທຳລາຍ; ເພາະ
ວ່າພຣະຜູ້ເປັນເຈົ້າຈະບໍ່ຍອມໃຫ້ [ກ]ເລືອດ
ຂອງໄພ່ພົນຂອງພຣະອົງຊຶ່ງຖືກພວກເຂົາ
ຫລັ່ງ ຮ້ອງທູນພຣະອົງຈາກພື້ນດິນສະເໝີ
ໄປເພື່ອ [ຂ]ການແກ້ແຄ້ນຄົນເຫລົ່ານັ້ນ ແລະ
ພຣະອົງບໍ່ແກ້ແຄ້ນພວກເຂົາ.

14 ກ ຄມພ ໝິ່ນປະໝາດ, ການໝິ່ນປະໝາດ.
15 ກ ຄມພ ຄຳສາບານ.
ຂ ປຖກ 4:7–8; ມຊ 5:28–30.
18 ກ ຄມພ ການມົ້ວສຸມລັບ.
21 ກ ຮລມ 6:28.
22 ກ ມມ 8:27, 40–41.
ຂ ຄມພ ແກ້ແຄ້ນ, ການແກ້ແຄ້ນ.

23 ດັ່ງນັ້ນ, ໂອ້ ທ່ານຄົນຕ່າງຊາດ, ມັນແມ່ນຄວາມສະຫລຽວສະຫລາດຂອງພຣະເຈົ້າ ທີ່ຈະ ໃຫ້ສິ່ງ ເຫລົ່າ ນີ້ເປັນທີ່ຮູ້ຈັກແກ່ທ່ານ, ເພື່ອ ໂດຍ ການ ນີ້ທ່ານ ຈະກັບ ໃຈຈາກບາບຂອງທ່ານ, ແລະ ບໍ່ປ່ອຍໃຫ້ການມົ້ວສຸມລັບຢູ່ເໜືອທ່ານ, ຊຶ່ງສ້າງຂຶ້ນເພື່ອໃຫ້ມີ [ກ]ອຳນາດ ແລະ ຮັບຜົນປະໂຫຍດ—ແລະ ວຽກງານ, ແທ້ຈິງແລ້ວ, ວຽກງານແຫ່ງຄວາມພິນາດຍ່ອມມາສູ່ທ່ານ, ແທ້ຈິງແລ້ວ, ແມ່ນດາບແຫ່ງຄວາມຍຸດຕິທຳຂອງພຣະເຈົ້າຜູ້ສະຖິດນິລັນດອນຈະຕົກລົງມາໃສ່ທ່ານເພື່ອການໂຄ່ນລົ້ມ, ແລະ ເພື່ອຄວາມພິນາດຂອງທ່ານ ຖ້າຫາກທ່ານຈະປ່ອຍໃຫ້ສິ່ງເຫລົ່ານີ້ມີຢູ່.

24 ດັ່ງນັ້ນ, ພຣະຜູ້ເປັນເຈົ້າໄດ້ບັນຊາທ່ານ, ເມື່ອທ່ານເຫັນສິ່ງເຫລົ່ານີ້ເກີດຂຶ້ນໃນບັນດາພວກທ່ານ, ທ່ານຄວນຈະຕື່ນຂຶ້ນສູ່ຄວາມເຂົ້າໃຈເຖິງສະພາບອັນເປັນຕາຢ້ານຂອງທ່ານ, ຍ້ອນວ່າການມົ້ວສຸມລັບນີ້ ຊຶ່ງຈະມີຢູ່ໃນບັນດາພວກທ່ານ; ຖ້າບໍ່ດັ່ງນັ້ນ ວິບັດຈົ່ງມີກັບມັນ, ເພາະເລືອດຂອງຄົນທັງຫລາຍທີ່ຖືກຂ້າຕາຍໄດ້ຮ້ອງຂຶ້ນຈາກພື້ນດິນເພື່ອແກ້ແຄ້ນມັນ, ແລະ ແກ້ແຄ້ນຜູ້ທີ່ສ້າງມັນຂຶ້ນມາ.

25 ເພາະວ່າເຫດການຈະບັງເກີດຂຶ້ນຄືຜູ້ໃດທີ່ສ້າງມັນ ຍ່ອມສະແຫວງຫາທີ່ຈະລົບລ້າງ [ກ]ອິດສະລະພາບຂອງແຜ່ນດິນ, ປະຊາຊາດ, ແລະ ປະເທດຊາດທັງໝົດ; ແລະ ຈະນຳເອົາຄວາມພິນາດມາສູ່ຜູ້ຄົນທັງໝົດ, ເພາະວ່າມັນຖືກສ້າງຂຶ້ນໂດຍບິດາຂອງຄວາມຂີ້ຕົວະທັງໝົດ, ແມ່ນຄົນຂີ້ຕົວະຜູ້ດຽວກັນນັ້ນທີ່ [ຂ]ຫລອກລວງບິດາມານດາຜູ້ທຳອິດຂອງເຮົາ, ແທ້ຈິງແລ້ວ, ແມ່ນຄົນຂີ້ຕົວະຜູ້ດຽວກັນນີ້ແຫລະທີ່ເຮັດໃຫ້ມະນຸດເຮັດຄາດຕະກຳນັບຕັ້ງແຕ່ການເລີ່ມຕົ້ນມາ; ເປັນຜູ້ທີ່ເຮັດໃຫ້ໃຈຂອງມະນຸດແຂງກະດ້າງ ຈົນໄດ້ຂ້າສາດສະດາທັງຫລາຍ, ແລະ ໄດ້ແກວ່ງກ້ອນຫີນໃສ່ພວກເພິ່ນ, ແລະ ຂັບໄລ່ພວກເພິ່ນອອກໄປນັບແຕ່ຕອນຕົ້ນ.

26 ດັ່ງນັ້ນຂ້າພະເຈົ້າໂມໂຣໄນຈຶ່ງໄດ້ຮັບບັນຊາໃຫ້ຂຽນເລື່ອງເຫລົ່ານີ້ ເພື່ອຄວາມຊົ່ວຕ່າງໆຈະໄດ້ໝົດໄປ, ແລະ ວ່າເວລາຈະມາຮອດ ຊຶ່ງຊາຕານຈະ [ກ]ບໍ່ມີອຳນາດເໜືອໃຈຂອງລູກຫລານມະນຸດ, ມີແຕ່ເຂົາຈະຖືກ [ຂ]ຊັກຈູງໃຫ້ເຮັດແຕ່ຄວາມດີຕະຫລອດໄປ, ເພື່ອເຂົາຈະໄດ້ມາຫາອ່າງນ້ຳແຫ່ງຄວາມຊອບທຳທັງປວງ ແລະ ລອດ.

## ບົດທີ 9

*ອານາຈັກສົ່ງຕໍ່ຈາກຜູ້ໜຶ່ງຫາອີກຜູ້ໜຶ່ງຕາມເຊື້ອສາຍ, ຕາມກົນອຸບາຍເລ່ຫລ່ຽມ, ແລະ ຕາມການຄາດຕະກຳ—ອີເມີເຫັນພຣະບຸດແຫ່ງຄວາມຊອບທຳ—ສາດສະດາຫລາຍທ່ານຮຽກຮ້ອງໃຫ້ມີການກັບໃຈ—ມີຄວາມອຶດຢາກເກີດຂຶ້ນ ແລະ ມີງູພິດກັດຕອດຜູ້ຄົນ.*

1 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນເລີ່ມເຮັດບັນທຶກຂອງຂ້າພະເຈົ້າຕໍ່ໄປ. ສະນັ້ນ, ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຍ້ອນວ່າ [ກ]ການມົ້ວສຸມລັບຂອງເອຄິດ ແລະ ໝູ່ເພື່ອນຂອງລາວ, ຈົ່ງເບິ່ງ, ພວກເຂົາໄດ້ໂຄ່ນລົ້ມອານາຈັກຂອງໂອເມ.

23 *ກ* 1 ນຟ 22:22–23; ມຊ 6:15.
25 *ກ* ຄມພ ອິດສະລະ, ອິດສະລະພາບ.
*ຂ* ປຖກ 3:1–13; 2 ນຟ 9:9; ມຊຢ 16:3; ມຊ 4:5–19.
26 *ກ* 1 ນຟ 22:26.
*ຂ* 2 ນຟ 33:4; ມຣນ 7:12–17.
**9** 1 *ກ* ອທ 8:13–17.

2 ເຖິງຢ່າງໃດກໍຕາມ, ພຣະຜູ້ເປັນເຈົ້າ
ຍັງໄດ້ເມດຕາສົງສານໂອເມ, ພ້ອມທັງລູກ
ຊາຍ ແລະ ລູກສາວຂອງລາວ ຜູ້ທີ່ບໍ່ພະຍາ
ຍາມທຳລາຍລາວ.

3 ແລະ ພຣະຜູ້ເປັນເຈົ້າໄດ້ເຕືອນໂອເມ
ໃນຄວາມຝັນວ່າ ລາວຄວນອອກໄປຈາກ
ແຜ່ນດິນ; ດັ່ງນັ້ນໂອເມຈຶ່ງໄດ້ອອກໄປຈາກ
ແຜ່ນດິນ ພ້ອມດ້ວຍຄອບຄົວຂອງລາວ,
ແລະ ໄດ້ເດີນທາງໄປຫລາຍມື້, ແລະ ມາ
ຮອດ ແລະ ຜ່ານເນີນພູ [ກ]ຊິມໄປ, ແລະ
ໄດ້ມາຮອດ [ຂ]ບ່ອນຊຶ່ງຊາວນີໄຟໄດ້ຖືກທຳ
ລາຍ, ແລະ ຈາກບ່ອນນັ້ນໄປທາງຕາເວັນ
ອອກ, ແລະ ມາຮອດບ່ອນໃກ້ຝັ່ງທະເລ ຊຶ່ງ
ມີຊື່ວ່າ ອາບລຳ, ແລະ ບ່ອນນັ້ນລາວໄດ້ຕັ້ງ
ຜ້າເຕັ້ນຂຶ້ນ ພ້ອມທັງລູກຊາຍ ແລະ ລູກ
ສາວຂອງລາວນຳອີກ, ແລະ ຄົນໃນຄອບ
ຄົວຂອງລາວທັງໝົດນອກຈາກຢາເຣັດ
ແລະ ຄອບຄົວຂອງລາວເທົ່ານັ້ນ.

4 ແລະ ເຫດການ ໄດ້ ບັງເກີດຂຶ້ນຄື
ຢາເຣັດໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດປົກ
ຄອງຜູ້ຄົນດ້ວຍມືຂອງຄວາມຊົ່ວຮ້າຍ;
ແລະ ລາວໄດ້ຍົກລູກສາວຂອງລາວໃຫ້
ເປັນພັນລະຍາຂອງເອຄິດ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເອ
ຄິດພະຍາຍາມທີ່ຈະຂ້າພໍ່ເຖົ້າຂອງຕົນ;
ແລະ ລາວໄດ້ຂໍຮ້ອງຜູ້ທີ່ລາວໃຫ້ກ່າວຄຳ
ສາບານດ້ວຍຄຳສາບານຂອງຄົນໃນສະ
ໄໝບູຮານ, ແລະ ພວກນັ້ນກໍໄດ້ຫົວພໍ່ເຖົ້າ
ຂອງເອຄິດ, ໃນຂະນະທີ່ຢາເຣັດນັ່ງຢູ່ໃນ
ບັນລັງກ່າວຄຳປາໄສຕໍ່ຜູ້ຄົນ.

6 ເພາະການແຜ່ສັງຄົມທີ່ຊົ່ວຮ້າຍ ແລະ
ລຶກລັບນີ້ເປັນໄປຢ່າງໃຫຍ່ຫລວງ ຈົນວ່າ
ມັນໄດ້ເຮັດໃຫ້ໃຈຂອງຜູ້ຄົນທັງໝົດເສື່ອມ
ໂຊມ; ສະນັ້ນ ຢາເຣັດຈຶ່ງຖືກລອບຂ້າໃນ
ບັນລັງຂອງລາວເອງ, ແລະ ເອຄິດໄດ້ຂຶ້ນ
ປົກຄອງແທນ.

7 ແລະ ເຫດການໄດ້ບັງເກີດຂຶ້ນຄື ເອ
ຄິດເລີ່ມມີຄວາມອິດສາບັງບຽດລູກຊາຍ
ຄົນໜຶ່ງຂອງຕົນ, ສະນັ້ນ ລາວຈຶ່ງໄດ້ເອົາ
ລູກຊາຍຂອງຕົນຂັງໄວ້ໃນຄຸກ, ແລະ ໃຫ້
ຂັງໄວ້ໂດຍເອົາອາຫານໃຫ້ກິນພຽງເລັກ
ໜ້ອຍ ຫລື ວ່າບໍ່ໃຫ້ກິນເລີຍ ຈົນເຖິງແກ່
ຄວາມຕາຍ.

8 ແລະ ບັດນີ້ນ້ອງຊາຍຂອງຜູ້ທີ່ຕາຍ, (ມີ
ຊື່ວ່າ ນິມຣາ) ໄດ້ຄຽດແຄ້ນໃຫ້ບິດາຂອງ
ລາວຍ້ອນສິ່ງທີ່ບິດາຂອງລາວໄດ້ເຮັດກັບ
ອ້າຍຂອງລາວ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ນິມ
ຣາໄດ້ເຕົ້າໂຮມຄົນຈຳນວນໜຶ່ງ, ແລະ ໄດ້
ໜີອອກຈາກແຜ່ນດິນໄປ, ແລະ ໄດ້ຂ້າມ
ໄປຢູ່ກັບໂອເມ.

10 ແລະ ເຫດການໄດ້ບັງເກີດຂຶ້ນຄື ເອ
ຄິດໄດ້ລູກຊາຍຕື່ມອີກ, ແລະ ພວກເຂົາໄດ້
ເອົາຊະນະໃຈຂອງຜູ້ຄົນ ເຖິງແມ່ນພວກ
ເຂົາໄດ້ສາບານກັບລາວວ່າຈະເຮັດຄວາມ
ຊົ່ວຮ້າຍນາໆປະການຕາມທີ່ລາວປາດຖະ
ໜາ.

11 ບັດນີ້ຜູ້ຄົນຂອງເອຄິດປາດຖະໜາ
ຜົນປະໂຫຍດ, ຄືກັນກັບທີ່ເອຄິດປາດຖະ
ໜາອຳນາດ; ດັ່ງນັ້ນ, ພວກລູກຊາຍຂອງ
ເອຄິດຈຶ່ງໄດ້ແຈກຢາຍເງິນໃຫ້ພວກເຂົາ,
ຊຶ່ງດ້ວຍວິທີນີ້ ພວກເຂົາຈຶ່ງໄດ້ດຶງຜູ້ຄົນ
ສ່ວນຫລາຍມາຫາພວກເຂົາ.

12 ແລະ ມັນເລີ່ມມີສົງຄາມລະຫວ່າງ
ພວກລູກຊາຍຂອງເອຄິດກັບຕົວເອຄິດ
ເອງເປັນເວລາຫລາຍປີ, ແທ້ຈິງແລ້ວ, ຈົນ
ວ່າໄປສູ່ຄວາມພິນາດຂອງຜູ້ຄົນທີ່ຢູ່ໃນອາ
ນາຈັກເກືອບໝົດ, ແທ້ຈິງແລ້ວ, ແມ່ນທັງ

3 *ກ* ມມ 1:3; 4:23.

*ຂ* ມມ 6:1–15.

ໝົດ ນອກຈາກຄົນສາມສິບຄົນກັບພວກທີ່
ໜີໄປກັບເຊື້ອສາຍຂອງໂອເມເທົ່ານັ້ນ.
13 ດັ່ງນັ້ນ, ໂອເມຈຶ່ງໄດ້ກັບຄືນມາຫາ
ແຜ່ນດິນຊຶ່ງເປັນມູນມໍລະດົກຂອງຕົນອີກ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂອເມເລີ່ມເຖົ້າແກ່ລົງ; ເຖິງຢ່າງໃດກໍຕາມ,
ລາວກໍຍັງໄດ້ລູກຊາຍອີກຄົນໜຶ່ງໃນໄວ
ຊະລາຂອງລາວ ຊື່ວ່າ ອີເມີ; ແລະ ລາວໄດ້
ແຕ່ງຕັ້ງໃຫ້ອີເມີເປັນກະສັດປົກຄອງແທນ.
15 ແລະ ຫລັງຈາກທີ່ລາວໄດ້ແຕ່ງຕັ້ງ
ອີເມີໃຫ້ເປັນກະສັດແທນແລ້ວ, ລາວໄດ້
ເຫັນສັນຕິສຸກໃນແຜ່ນດິນຢູ່ສອງປີ, ແລະ
ລາວໄດ້ສິ້ນຊີວິດໄປ, ໂດຍທີ່ໄດ້ເຫັນວັນ
ເວລາຊຶ່ງເຕັມໄປດ້ວຍຄວາມເສົ້າສະຫລົດ
ໃຈເປັນເວລາຍາວນານ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ອີເມີໄດ້ປົກຄອງແທນ
ລາວ, ແລະ ໄດ້ກະທຳຕາມຕົວຢ່າງຂອງ
ບິດາຕົນ.
16 ແລະ ພຣະຜູ້ເປັນເຈົ້າເລີ່ມເອົາຄຳ
ສາບແຊ່ງອອກໄປຈາກແຜ່ນດິນອີກ, ແລະ
ເຊື້ອສາຍຂອງອີເມີໄດ້ຈະເລີນຮຸ່ງເຮືອງ
ຢ່າງຍິ່ງພາຍໃຕ້ການປົກຄອງຂອງອີເມີ;
ແລະ ໃນເວລາຫົກສິບສອງປີ ພວກເຂົາກັບ
ມາເປັນຄົນເຂັ້ມແຂງຢ່າງຍິ່ງ, ເຖິງຂະໜາດ
ທີ່ພວກເຂົາກາຍມາເປັນຄົນຮັ່ງມີຢ່າງຍິ່ງ—
17 ໂດຍມີໝາກໄມ້ນາໆຊະນິດ, ແລະ
ເຄື່ອງປູກຂອງຝັງ, ແລະ ຜ້າໄໝ, ແລະ ຜ້າ
ລີນິນຢ່າງດີ, ແລະ ຄຳ, ແລະ ເງິນ, ແລະ
ຂອງມີຄ່າຫລາຍຢ່າງ;
18 ແລະ ກໍມີຝູງສັດລ້ຽງ, ງົວເຖິກ, ແລະ
ງົວແມ່, ແລະ ແກະ, ແລະ ໝູ, ແລະ ແບ້,
ແລະ ສັດອື່ນໆອີກຫລາຍຊະນິດທີ່ມີປະ
ໂຫຍດສຳລັບເປັນອາຫານຂອງມະນຸດນຳ
ອີກ.
19 ແລະ ພວກເຂົາກໍມີ [ກ]ຝູງມ້າ, ແລະ ລໍ,
ແລະ ກໍມີຊ້າງ ແລະ ມີຄູຣີລຳ ແລະ ຄູມຳນຳ
ອີກ; ຊຶ່ງທັງໝົດເປັນປະໂຫຍດແກ່ມະນຸດ,
ແລະ ໂດຍສະເພາະແມ່ນຝູງຊ້າງ, ຄູຣີລຳ,
ແລະ ຄູມຳ.
20 ແລະ ພຣະຜູ້ເປັນເຈົ້າໄດ້ຖອກເທ
ພຣະພອນລົງມາເທິງແຜ່ນດິນດັ່ງນີ້ ຊຶ່ງ
ເປັນແຜ່ນດິນທີ່ [ກ]ປະເສີດເລີດລ້ຳກວ່າ
ແຜ່ນດິນອື່ນໃດທັງສິ້ນ; ແລະ ພຣະອົງໄດ້
ບັນຊາວ່າ ຜູ້ໃດກໍຕາມທີ່ຈະເປັນເຈົ້າຂອງ
ແຜ່ນດິນ ຜູ້ນັ້ນຄວນຄອບຄອງມັນໄວ້ໃຫ້
ກັບພຣະຜູ້ເປັນເຈົ້າ, ຖ້າບໍ່ດັ່ງນັ້ນ ເຂົາຈະ
ຖືກ [ຂ]ທຳລາຍເວລາເຂົາສຸກໃນຄວາມຊົ່ວ
ຮ້າຍ; ເພາະກັບຄົນເຊັ່ນນັ້ນ, ພຣະຜູ້ເປັນ
ເຈົ້າໄດ້ກ່າວ: ເຮົາຈະຖອກເທຄວາມບໍລິ
ບູນແຫ່ງຄວາມໂມໂຫຂອງເຮົາອອກມາ.
21 ແລະ ອີເມີໄດ້ດຳເນີນການຕັດສິນ
ດ້ວຍຄວາມຍຸດຕິທຳຕະຫລອດວັນເວລາ
ຂອງລາວ, ແລະ ລາວໄດ້ມີລູກຊາຍ ແລະ
ລູກສາວຫລາຍຄົນ; ແລະ ມີລູກຊາຍຜູ້ໜຶ່ງ
ຊື່ວ່າ ໂຄຣິອານທຳ, ແລະ ລາວໄດ້ແຕ່ງຕັ້ງ
ໃຫ້ໂຄຣິອານທຳຂຶ້ນປົກຄອງແທນ.
22 ແລະ ຫລັງຈາກທີ່ລາວໄດ້ແຕ່ງຕັ້ງໃຫ້
ໂຄຣິອານທຳປົກຄອງແທນແລ້ວ ລາວກໍ
ມີຊີວິດຢູ່ຕື່ມອີກສີ່ປີ, ແລະ ລາວກໍໄດ້ເຫັນ
ສັນຕິສຸກໃນແຜ່ນດິນ; ແທ້ຈິງແລ້ວ, ແລະ
ເຖິງແມ່ນລາວໄດ້ເຫັນ [ກ]ພຣະບຸດແຫ່ງ
ຄວາມຊອບທຳ, ແລະ ລາວມີຄວາມປິຕິຍິນ
ດີ ແລະ ປາບປື້ມໃນວັນເວລາຂອງລາວ;
ແລະ ລາວກໍໄດ້ສິ້ນຊີວິດໄປໃນຄວາມ
ສະຫງົບສຸກ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄ
ຣິອານທຳໄດ້ກະທຳຕາມຕົວຢ່າງຂອງບິດາ
ຕົນ, ແລະ ໄດ້ສ້າງເມືອງໃຫຍ່ຫລາຍເມືອງ,

19 *ກ* 1 ນຟ 18:25.
20 *ກ* ອທ 2:15.
*ຂ* ອທ 2:8–11.
22 *ກ* 3 ນຟ 25:2.

ແລະ ໄດ້ໃຫ້ຄວາມດີແກ່ຜູ້ຄົນຕະຫລອດ
ວັນເວລາຂອງລາວ. ແລະ ເຫດການໄດ້
ບັງເກີດຂຶ້ນຄື ລາວບໍ່ມີລູກເລີຍ ຈົນວ່າລາວ
ເຖົ້າແກ່ຊະລາລົງ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ພັນ
ລະຍາຂອງລາວໄດ້ສິ້ນຊີວິດເມື່ອນາງມີອາ
ຍຸໄດ້ໜຶ່ງຮ້ອຍສອງປີ. ແລະ ເຫດການໄດ້
ບັງເກີດຂຶ້ນຄື ໃນໄວຊະລາຂອງໂຄຣິອານ
ທຳ, ລາວໄດ້ຮັບເອົາຍິງສາວຄົນໜຶ່ງມາ
ເປັນພັນລະຍາ, ແລະ ໄດ້ມີລູກຊາຍ ແລະ
ລູກສາວຫລາຍຄົນ; ດັ່ງນັ້ນ ລາວຈຶ່ງມີຊີວິດ
ຢູ່ຈົນເຖິງໜຶ່ງຮ້ອຍສີ່ສິບສອງປີ.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ມີລູກຊາຍຜູ້ໜຶ່ງຊື່ວ່າ ຄອມ, ແລະ ຄອມໄດ້
ຂຶ້ນປົກຄອງແທນ; ແລະ ລາວໄດ້ປົກຄອງຢູ່
ສີ່ສິບເກົ້າປີ, ແລະ ລາວໄດ້ມີລູກຊາຍຊື່ວ່າ
ເຫັດ; ແລະ ເຫັດໄດ້ມີລູກຊາຍ ແລະ ລູກ
ສາວຫລາຍຄົນຄືກັນ.
26 ແລະ ຜູ້ຄົນໄດ້ແຜ່ຂະຫຍາຍອອກໄປ
ທົ່ວພື້ນແຜ່ນດິນອີກ, ແລະ ເລີ່ມມີຄວາມ
ຊົ່ວຮ້າຍຫລາຍໃນແຜ່ນດິນອີກ ແລະ ເຫັດ
ເລີ່ມຖືແຜນລຶກລັບຂອງສະໄໝກ່ອນອີກ
ເພື່ອທຳລາຍບິດາຂອງຕົນ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື
ລາວໄດ້ປົດບິດາຂອງຕົນອອກຈາກບັນລັງ,
ໂດຍການຂ້າດ້ວຍດາບຂອງຕົນເອງ; ແລະ
ລາວໄດ້ຂຶ້ນປົກຄອງແທນ.
28 ແລະ ມີສາດສະດາຫລາຍທ່ານໃນ
ແຜ່ນດິນອີກ, ມາປ່າວເຕືອນເລື່ອງການກັບ
ໃຈຕໍ່ຜູ້ຄົນທັງຫລາຍວ່າ—ພວກເຂົາຕ້ອງ
ຕຽມທາງຂອງພຣະຜູ້ເປັນເຈົ້າ ຖ້າບໍ່ດັ່ງນັ້ນ
ຄຳສາບແຊ່ງຈະມາສູ່ພື້ນແຜ່ນດິນ; ແທ້ຈິງ
ແລ້ວ, ມັນຈະມີຄວາມອຶດຢາກຢ່າງໃຫຍ່
ຫລວງ ຊຶ່ງຈະເປັນເຫດໃຫ້ພວກເຂົາຖືກ
ທຳລາຍ ຖ້າຫາກພວກເຂົາບໍ່ກັບໃຈ.
29 ແຕ່ວ່າຜູ້ຄົນບໍ່ເຊື່ອຄຳຂອງສາດສະ
ດາເລີຍ, ແຕ່ໄດ້ຂັບໄລ່ພວກເພິ່ນອອກໄປ;
ແລະ ພວກເຂົາໄດ້ໂຍນຫລາຍທ່ານລົງ
ໃນຂຸມ ແລະ ປະໃຫ້ພວກເພິ່ນຕາຍ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້
ເຮັດສິ່ງທັງໝົດນີ້ຕາມຄຳສັ່ງຂອງກະສັດ
ເຫັດ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ
ເລີ່ມມີການຂາດແຄນເກີດຂຶ້ນຢ່າງໃຫຍ່
ຫລວງໃນແຜ່ນດິນ, ແລະ ຜູ້ອາໄສຢູ່ເລີ່ມ
ຖືກທຳລາຍຢ່າງວ່ອງໄວດ້ວຍການຂາດ
ແຄນນັ້ນ, ເພາະວ່າມັນບໍ່ມີຝົນຕົກລົງມາ
ເທິງພື້ນແຜ່ນດິນເລີຍ.
31 ແລະ ມັນໄດ້ມີງູພິດອອກໄປຕາມພື້ນ
ແຜ່ນດິນອີກ, ແລະ ມັນໄດ້ຕອດຜູ້ຄົນຢ່າງ
ຫລວງຫລາຍ. ແລະ ເຫດການໄດ້ບັງເກີດ
ຂຶ້ນຄື ຝູງສັດລ້ຽງຂອງພວກເຂົາໄດ້ເລີ່ມ
ແຕກໜີຜ່າຍງູພິດໄປທາງໃຕ້ ຊຶ່ງຊາວນີໄຟ
ເອີ້ນວ່າ [ກ]ເຊຣາເຮັມລາ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ
ສັດຫລາຍໂຕທີ່ຕາຍໄປລະຫວ່າງທາງ;
ເຖິງຢ່າງໃດກໍຕາມ, ຍັງມີຝູງສັດລ້ຽງເປັນ
ຈຳນວນຫລວງຫລາຍໜີໄປຮອດແຜ່ນດິນ
ທາງໃຕ້.
33 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ [ກ]ງູເຊົາຕິດຕາມ
ທຳຮ້າຍຝູງສັດທີ່ພະຍາຍາມໜີໄປນັ້ນ, ແຕ່
ໃຫ້ມັນກັນເສັ້ນທາງເພື່ອບໍ່ໃຫ້ຜູ້ຄົນຜ່ານ
ໄປໄດ້, ແລະ ຖ້າວ່າຜູ້ໃດຈະລອງຜ່ານໄປ
ຜູ້ນັ້ນກໍຈະລົ້ມຕາຍເພາະຖືກງູພິດຕອດ.
34 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນໄດ້ຕິດຕາມເສັ້ນທາງຂອງສັດເຫລົ່າ
ນັ້ນ, ແລະ ໄດ້ກິນຊາກສັດທີ່ລົ້ມຕາຍຕາມ

31 *ກ* ອມນ 1:13.
33 *ກ* ຈບຊ 21:6–9.

ທາງຈົນວ່າພວກເຂົາໄດ້ກິນໝົດກ້ຽງ. ບັດ
ນີ້ເວລາ ຜູ້ຄົນ ເຫັນ ວ່າ ພວກ ເຂົາ ຈະ ຕ້ອງ
ຕາຍ ພວກເຂົາກໍເລີ່ມ [ກ]ກັບໃຈຈາກຄວາມ
ຊົ່ວຮ້າຍຂອງພວກເຂົາ ແລະ ໄດ້ຮ້ອງທູນຕໍ່
ພຣະຜູ້ເປັນເຈົ້າ.
35 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ ຄື
ເວລາພວກເຂົາ [ກ]ຖ່ອມຕົວພຽງພໍຕໍ່ພຣະ
ພັກຂອງພຣະຜູ້ເປັນເຈົ້າ ພຣະອົງກໍໄດ້ສົ່ງ
ຝົນລົງມາເທິງພື້ນແຜ່ນດິນ; ແລະ ຜູ້ຄົນກໍ
ເລີ່ມຟື້ນຂຶ້ນມາໃໝ່, ແລະ ມັນເລີ່ມມີໝາກ
ໄມ້ໃນຂົງເຂດທາງເໜືອ, ແລະ ໃນຂົງເຂດ
ອ້ອມແອ້ມນັ້ນ. ແລະ ພຣະຜູ້ເປັນເຈົ້າໄດ້
ສະແດງອຳນາດຂອງພຣະອົງແກ່ພວກເຂົາ
ໃນການປົກປັກຮັກສາພວກເຂົາ ໃຫ້ພົ້ນ
ຈາກຄວາມອຶດຢາກ.

## ບົດທີ 10

*ກະສັດຜູ້ໜຶ່ງຂຶ້ນປົກຄອງແທນກະສັດອີກຜູ້ໜຶ່ງຕໍ່ໆກັນໄປ—ກະສັດບາງຄົນຊອບທຳ; ບາງຄົນກໍຊົ່ວ—ເວລາມີຄວາມຊອບທຳ ຜູ້ຄົນກໍຈະເລີນຮຸ່ງເຮືອງ ແລະ ໄດ້ຮັບພອນຈາກພຣະຜູ້ເປັນເຈົ້າ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊັດ
ຜູ້ສືບ ຕະກຸນຂອງເຫັດ—ເພາະເຫັດໄດ້
ຕາຍໄປດ້ວຍຄວາມອຶດຢາກກັບຄົນໃນ
ຄອບຄົວຂອງລາວທັງໝົດ ນອກຈາກເຊັດ
ຄົນດຽວເທົ່ານັ້ນ—ດັ່ງນັ້ນ, ເຊັດຈຶ່ງໄດ້ເລີ່ມ
ຕົ້ນສ້າງຜູ້ຄົນຜູ້ທີ່ຊຸດໂຊມຄືນອີກ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊັດ
ໄດ້ລະນຶກເຖິງຄວາມພິນາດຂອງບັນພະບຸ
ລຸດຂອງລາວ; ແລະ ລາວໄດ້ສ້າງອານາ
ຈັກອັນຊອບທຳຂຶ້ນ; ເພາະວ່າລາວຈື່ຈຳສິ່ງ
ທີ່ພຣະຜູ້ເປັນເຈົ້າໄດ້ກະທຳໃນການນຳພາ
ຢາເຣັດ ແລະ ນ້ອງຊາຍຂອງລາວ [ກ]ຂ້າມ
ຄວາມເລິກຂອງທະເລມາ; ແລະ ລາວໄດ້
ເດີນໃນທາງຂອງພຣະຜູ້ເປັນເຈົ້າ; ແລະ
ລາວໄດ້ມີລູກຊາຍ ແລະ ລູກສາວຫລາຍ
ຄົນ.
3 ແລະ ລູກຊາຍກົກຂອງລາວຊື່ວ່າ ເຊັດ,
ໄດ້ກະບົດຕໍ່ລາວ; ເຖິງຢ່າງໃດກໍຕາມ, ເຊັດ
ໄດ້ຖືກຂ້າດ້ວຍມືຂອງໂຈນ, ເພາະຂອງມີ
ຄ່າອັນຫລວງຫລາຍຂອງລາວ, ຊຶ່ງໄດ້ນຳ
ສັນຕິສຸກມາສູ່ບິດາຂອງລາວອີກ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ບິດາ
ຂອງລາວໄດ້ສ້າງຫລາຍເມືອງຂຶ້ນໃນພື້ນ
ແຜ່ນດິນ, ແລະ ຜູ້ຄົນເລີ່ມແຜ່ຂະຫຍາຍໄປ
ທົ່ວພື້ນແຜ່ນດິນອີກ. ແລະ ເຊັດໄດ້ມີຊີວິດ
ຢູ່ດົນນານທີ່ສຸດ; ແລະ ລາວໄດ້ມີລູກຊາຍ
ຄົນໜຶ່ງຊື່ ຣິບລາຄິດ. ແລະ ລາວໄດ້ສິ້ນຊີ
ວິດໄປ, ແລະ ຣິບລາຄິດໄດ້ຂຶ້ນປົກຄອງ
ແທນ.
5 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຣິບລາຄິດບໍ່ໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍ
ພຣະເນດຂອງພຣະຜູ້ເປັນເຈົ້າເລີຍ, ຍ້ອນ
ວ່າລາວມີມະເຫສີ ແລະ [ກ]ນາງສະໜົມ
ຫລາຍຄົນ, ແລະ ໄດ້ວາງພາລະອັນເຫລືອ
ທີ່ຈະທົນໄດ້ໃຫ້ກັບຜູ້ຄົນ; ແທ້ຈິງແລ້ວ,
ລາວໄດ້ເກັບພາສີນຳຜູ້ຄົນເຫລົ່ານັ້ນດ້ວຍ
ຄ່າພາສີອັນແພງ; ແລະ ດ້ວຍພາສີນັ້ນ
ລາວຈຶ່ງໄດ້ສ້າງອາຄານອັນກວ້າງໃຫຍ່
ຫລາຍແຫ່ງ.
6 ແລະ ລາວໄດ້ສ້າງບັນລັງອັນງົດງາມ
ທີ່ສຸດໃຫ້ຕົນເອງ ແລະ ໄດ້ສ້າງຄຸກຫລາຍ
ແຫ່ງນຳອີກ, ແລະ ຄົນໃດທີ່ບໍ່ຍອມເສຍພາ
ສີ ລາວກໍເອົາເຂົາເຂົ້າຄຸກ; ແລະ ຄົນໃດທີ່ບໍ່
ສາມາດເສຍພາສີ ລາວກໍເອົາເຂົາເຂົ້າຄຸກ;
ແລະ ລາວໄດ້ໃຫ້ພວກເຂົາອອກແຮງງານ

34 ກ ແອວ 34:34; ຄພ 101:8.
35 ກ ຄພ 5:24.
**10** 2 ກ ອທ 6:1–12.
5 ກ ຢຄ 3:5; ມຊຍ 11:2.

ໜັກ ຕະຫລອດ ເວລາ ເພື່ອ ລ້ຽງ ຕົນ; ແລະ
ຄົນໃດທີ່ບໍ່ຍອມອອກແຮງງານ ລາວກໍສັ່ງ
ໃຫ້ຂ້າຄົນນັ້ນຖິ້ມ.
7 ດັ່ງນັ້ນ ລາວຈຶ່ງໄດ້ສິ່ງຂອງດີໆທັງໝົດ,
ແທ້ ຈິງ ແລ້ວ, ເຖິງ ແມ່ນ ຄຳ ແນວ ດີ ຂ ອງ
ລາວ, ລາວກໍສັ່ງໃຫ້ຫລໍ່ຫລອມໃຫ້ບໍລິສຸດຢູ່
ໃນຄຸກ; ແລະ ງານຝີມືດີນາໆຊະນິດ ລາວ
ກໍສັ່ງໃຫ້ເຮັດຢູ່ໃນຄຸກ. ແລະ ເຫດການໄດ້
ບັງເກີດຂຶ້ນຄື ລາວໄດ້ເຮັດໃຫ້ຜູ້ຄົນໄດ້ຮັບ
ຄວາມທຸກຍາກລຳບາກຫລາຍເພາະການ
ໂສເພນີ ແລະ ຄວາມໜ້າກຽດຊັງຂອງ
ລາວ.
8 ແລະ ເມື່ອລາວປົກຄອງເປັນເວລາສີ່
ສິບສອງປີ ຜູ້ຄົນໄດ້ລຸກຂຶ້ນໃນການກະບົດ
ຕໍ່ລາວ; ແລະ ມັນເລີ່ມມີສົງຄາມເກີດຂຶ້ນ
ອີກໃນແຜ່ນດິນ, ເຖິງຂະໜາດທີ່ຣິບລາຄິດ
ຖືກຂ້າຕາຍ, ແລະ ຜູ້ສືບຕະກຸນຂອງລາວກໍ
ຖືກຂັບໄລ່ອອກຈາກແຜ່ນດິນໄປ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກ ຫລາຍ ປີຜ່ານ ໄປ, ໂມຣິ ອານທັນ,
(ໂດຍທີ່ເປັນຜູ້ສືບຕະກຸນຂອງຣິບລາຄິດ)
ໄດ້ເຕົ້າໂຮມກຳລັງທັບຈາກຜູ້ຄົນຜູ້ທີ່ຖືກ
ຂັບໄລ່ອອກໄປ, ແລະ ໄດ້ຍົກໄປສູ້ຮົບກັບຜູ້
ຄົນ ແລະ ລາວໄດ້ຍຶດເອົາຫລາຍຫົວເມືອງ;
ແລະ ສົງຄາມກັບມາຮ້າຍແຮງຫລາຍຂຶ້ນ,
ແລະ ມັນໄດ້ຄົງຢູ່ເປັນເວລາຫລາຍປີ;
ແລະ ລາວໄດ້ມີອຳນາດປົກຄອງທົ່ວແຜ່ນ
ດິນ, ແລະ ໄດ້ສະຖາປະນາຕົນເອງຂຶ້ນເປັນ
ກະສັດປົກຄອງທົ່ວແຜ່ນດິນ.
10 ແລະ ຫລັງຈາກທີ່ລາວໄດ້ແຕ່ງຕັ້ງຕົນ
ເອງເປັນກະສັດແລ້ວ, ລາວໄດ້ຫລຸດຜ່ອນ
ພາລະຂອງຜູ້ຄົນໃຫ້ເບົາບາງລົງ, ຊຶ່ງດ້ວຍ
ການນີ້ ລາວຈຶ່ງໄດ້ຮັບຄວາມນິຍົມຊົມຊອບ
ໃນສາຍຕາຂອງຜູ້ຄົນ, ແລະ ພວກເຂົາ
ໄດ້ແຕ່ງຕັ້ງລາວໃຫ້ເປັນກະສັດຂອງພວກ
ເຂົາ.
11 ແລະ ລາວໄດ້ໃຫ້ຄວາມຍຸດຕິທຳແກ່
ຜູ້ຄົນ, ແຕ່ບໍ່ໄດ້ໃຫ້ແກ່ຕົວເອງ ເພາະການ
ໂສເພນີຢ່າງຫລວງຫລາຍຂອງລາວ; ດັ່ງ
ນັ້ນ ລາວຈຶ່ງໄດ້ຖືກຕັດອອກຈາກທີ່ປະທັບ
ຂອງພຣະຜູ້ເປັນເຈົ້າ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມ
ຣິອານທັນໄດ້ສ້າງເມືອງຫລາຍເມືອງຂຶ້ນ,
ແລະ ຜູ້ຄົນກັບມາຮັ່ງມີເປັນດີຢ່າງຍິ່ງພາຍ
ໃຕ້ການປົກຄອງຂອງລາວ, ທັງອາຄານ
ແລະ ຄຳ ແລະ ເງິນ, ແລະ ທາງການປູກ
ຝັງພືດພັນທັນຍາຫານ, ແລະ ທາງຝູງສັດ
ລ້ຽງ, ແລະ ສັດໃຊ້ແຮງງານ, ແລະ ສິ່ງດັ່ງ
ກ່າວຖືກນຳກັບຄືນມາຫາພວກເຂົາອີກ.
13 ແລະ ໂມຣິອານທັນໄດ້ມີຊີວິດຢູ່ຢ່າງ
ຍາວນານ, ແລະ ແລ້ວລາວໄດ້ມີລູກຊາຍ
ຊື່ວ່າ ຄິມ; ແລະ ຄິມໄດ້ປົກຄອງແທນບິດາ
ຂອງລາວຢູ່ແປດປີ, ແລະ ບິດາຂອງລາວກໍ
ໄດ້ສິ້ນຊີວິດໄປ. ແລະ ເຫດການໄດ້ບັງເກີດ
ຂຶ້ນຄື ຄິມບໍ່ໄດ້ປົກຄອງດ້ວຍຄວາມຊອບ
ທຳ, ດັ່ງນັ້ນ ລາວຈຶ່ງບໍ່ເປັນທີ່ໂປດປານ
ຂອງພຣະຜູ້ເປັນເຈົ້າ.
14 ແລະ ນ້ອງຊາຍຂອງລາວໄດ້ລຸກຂຶ້ນ
ໃນການກະບົດຕໍ່ລາວ, ຊຶ່ງດ້ວຍການນີ້
ລາວຈຶ່ງໄດ້ເອົາອ້າຍມາເປັນຊະເລີຍ; ແລະ
ຄິມໄດ້ຄົງຢູ່ເປັນຊະເລີຍຕະຫລອດວັນ
ເວລາຂອງລາວ; ແລະ ລາວໄດ້ມີລູກຊາຍ
ແລະ ລູກສາວຫລາຍຄົນໃນຂະນະທີ່ເປັນ
ຊະເລີຍນັ້ນ, ແລະ ໃນໄວຊະລາຂອງລາວ,
ລາວໄດ້ມີລູກຊາຍອີກຊື່ວ່າ ເລວີ; ແລະ ຄິມ
ໄດ້ສິ້ນຊີວິດໄປ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ເລວີ
ໄດ້ເປັນຊະເລີຍຫລັງຈາກບິດາຂອງລາວ
ເປັນເວລາສີ່ສິບສອງປີ, ແລະ ລາວໄດ້ກໍ່ສົງ
ຄາມກັບກະສັດຂອງແຜ່ນດິນ, ດ້ວຍເຫດນີ້
ລາວຈຶ່ງໄດ້ອານາຈັກມາເປັນຂອງຕົນ.
16 ແລະ ຫລັງຈາກລາວໄດ້ອານາຈັກມາ

ເປັນຂອງຕົນແລ້ວ ລາວໄດ້ເຮັດສິ່ງທີ່ຖືກ
ຕ້ອງໃນສາຍພຣະເນດຂອງພຣະຜູ້ເປັນ
ເຈົ້າ; ແລະ ຜູ້ຄົນຈຶ່ງໄດ້ຮຸ່ງເຮືອງຂຶ້ນຢູ່ໃນ
ແຜ່ນດິນ; ແລະ ລາວໄດ້ມີຊີວິດຢູ່ຢ່າງຍາວ
ນານ, ແລະ ໄດ້ມີລູກຊາຍ ແລະ ລູກສາວ
ຫລາຍຄົນ; ແລະ ລາວໄດ້ມີລູກຊາຍອີກ
ຊື່ວ່າ ໂຄຣຳ, ຊຶ່ງລາວໄດ້ແຕ່ງຕັ້ງໃຫ້ເປັນ
ກະສັດແທນ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂຄຣຳເຮັດແຕ່ສິ່ງທີ່ດີໃນສາຍພຣະເນດ
ຂອງພຣະຜູ້ເປັນເຈົ້າຕະຫລອດວັນເວລາ
ຂອງລາວ; ແລະ ລາວໄດ້ມີລູກຊາຍ ແລະ
ລູກສາວຫລາຍຄົນ; ແລະ ຫລັງຈາກທີ່ລາວ
ມີຊີວິດຢູ່ດົນນານແລ້ວ ລາວກໍໄດ້ຈາກ
ໄປຄືກັນກັບຄົນອື່ນໆຂອງແຜ່ນດິນໂລກ;
ແລະ ກີເຊໄດ້ຂຶ້ນປົກຄອງແທນ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ກີເຊ
ໄດ້ຈາກໄປອີກ, ແລະ ລິບໄດ້ຂຶ້ນປົກຄອງ
ແທນ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ລິບ
ເຮັດສິ່ງທີ່ດີໃນສາຍພຣະເນດຂອງພຣະຜູ້
ເປັນເຈົ້າຄືກັນ. ແລະ ໃນວັນເວລາຂອງລິບ
ນັ້ນງູ [ກ]ພິດຖືກທຳລາຍຈົນໝົດສິ້ນ. ດັ່ງນັ້ນ
ຜູ້ຄົນຈຶ່ງໄດ້ໄປຫາແຜ່ນດິນທາງໃຕ້ເພື່ອ
ຊອກຫາອາຫານໃຫ້ຜູ້ຄົນຂອງແຜ່ນດິນ,
ເພາະວ່າແຜ່ນດິນນັ້ນເຕັມໄປດ້ວຍສັດປ່າ.
ແລະ ຕົວລິບເອງກໍກາຍເປັນນາຍພານ
ໃຫຍ່ຜູ້ໜຶ່ງ.
20 ແລະ ພວກເຂົາໄດ້ສ້າງເມືອງໃຫຍ່
ເມືອງໜຶ່ງຂຶ້ນໃກ້ກັບຊ່ອງແຄບຂອງແຜ່ນ
ດິນໃກ້ກັບບ່ອນຊຶ່ງທະເລແບ່ງແຜ່ນດິນ
ອອກ.
21 ແລະ ພວກເຂົາໄດ້ປົກປັກຮັກສາ
ແຜ່ນດິນທາງໃຕ້ໄວ້ເປັນຖິ່ນແຫ້ງແລ້ງກັນ
ດານ ເພື່ອຈະໄດ້ສັດໄວ້ລ່າ. ແລະ ສ່ວນ
ແຜ່ນດິນທາງເໜືອນັ້ນ ເຕັມໄປດ້ວຍຜູ້ອາ
ໄສຢູ່.
22 ແລະ ພວກເຂົາມີການອຸດສາຫະກຳ
ຢ່າງຍິ່ງ, ແລະ ພວກເຂົາໄດ້ຊື້ຂາຍ ແລະ
ທຳການຄ້າລະຫວ່າງກັນ ເພື່ອຈະໄດ້ຜົນ
ປະໂຫຍດ.
23 ແລະ ພວກເຂົາໄດ້ຂຸດຄົ້ນແຮ່ນາໆ
ຊະນິດ, ແລະ ໄດ້ຫລໍ່ຫລອມຄຳ, ແລະ ເງິນ,
ແລະ [ກ]ເຫລັກ, ແລະ ທອງເຫລືອງ, ແລະ
ໂລຫະນາໆຊະນິດ; ແລະ ພວກເຂົາໄດ້ຂຸດ
ຄົ້ນມັນຂຶ້ນມາຈາກດິນ; ດັ່ງນັ້ນ, ພວກເຂົາ
ຈຶ່ງໄດ້ຖູນດິນຂຶ້ນເປັນກອງໃຫຍ່ເພື່ອໃຫ້ໄດ້
ແຮ່ ເປັນຄຳ, ແລະ ເປັນເງິນ, ແລະ ເປັນ
ເຫລັກ, ແລະ ເປັນທອງແດງ. ແລະ ພວກ
ເຂົາໄດ້ຜະລິດສິ່ງອື່ນໆອີກຫລາຍຢ່າງ.
24 ແລະ ພວກເຂົາໄດ້ຕ່ຳຜ້າໄໝ ແລະ
ຜ້າລິນິນຕ່ຳຢ່າງດີ; ແລະ ພວກເຂົາໄດ້ເຮັດ
ເສື້ອຜ້າຫລາຍຊະນິດ, ເພື່ອພວກເຂົາຈະ
ໄດ້ຫຸ້ມຫໍ່ຄວາມເປືອຍເປົ່າຂອງພວກເຂົາ.
25 ແລະ ພວກເຂົາໄດ້ເຮັດເຄື່ອງມືນາໆ
ຊະນິດເພື່ອໄຖດິນ, ທັງເພື່ອຂຸດ ແລະ ເພື່ອ
ຫວ່ານ, ແລະ ເພື່ອເກັບກ່ຽວ ແລະ ເພື່ອ
ພວນ, ແລະ ເພື່ອນວດນຳອີກ.
26 ແລະ ພວກເຂົາໄດ້ເຮັດເຄື່ອງມືນາໆ
ຊະນິດ ຊຶ່ງພວກເຂົາໄດ້ເຮັດໂດຍໃຊ້ແຮງ
ງານຂອງສັດຂອງພວກເຂົາ.
27 ແລະ ພວກເຂົາໄດ້ສ້າງອາວຸດແຫ່ງ
ສົງຄາມທຸກຊະນິດ. ແລະ ພວກເຂົາໄດ້
ເຮັດວຽກນາໆຊະນິດດ້ວຍຝີມືແປກຢ່າງ
ຍິ່ງ.
28 ແລະ ບໍ່ເຄີຍມີຜູ້ໃດເລີຍທີ່ໄດ້ຮັບ
ພອນຫລາຍກວ່າພວກເຂົາ, ແລະ ມີຄວາມ
ຈະເລີນຮຸ່ງເຮືອງໂດຍພຣະຫັດຂອງພຣະຜູ້

19 *ກ* ອທ 9:31.
23 *ກ* 2 ນຟ 5:15.

ເປັນເຈົ້າຫລາຍກວ່ານີ້. ແລະ ພວກເຂົາໄດ້
ຢູ່ໃນແຜ່ນດິນທີ່ປະເສີດເລີດລ້ຳກວ່າແຜ່ນ
ດິນອື່ນໃດທັງສິ້ນ, ເພາະວ່າພຣະຜູ້ເປັນ
ເຈົ້າໄດ້ກ່າວດັ່ງນັ້ນ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື ລິບ
ມີຊີວິດຢູ່ຢ່າງຍາວນານ, ແລະ ໄດ້ມີລູກ
ຊາຍ ແລະ ລູກສາວຫລາຍຄົນ; ແລະ ລາວ
ກໍມີລູກຊາຍອີກຊື່ວ່າ ຮີອາທຳ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ຮີອາ
ທຳໄດ້ປົກຄອງແທນບິດາຂອງລາວ. ແລະ
ເມື່ອຮີອາທຳໄດ້ປົກຄອງຢູ່ຊາວສີ່ປີ, ຈົ່ງ
ເບິ່ງ, ອານາຈັກຖືກຍຶດໄປຈາກລາວ. ແລະ
ລາວໄດ້ຕົກເປັນຊະເລີຍຫລາຍປີ, ແທ້ຈິງ
ແລ້ວ, ແມ່ນຕະຫລອດວັນເວລາທີ່ເຫລືອຢູ່
ຂອງລາວ.
31 ແລະ ລາວໄດ້ມີລູກຊາຍຊື່ວ່າ ເຫັດ,
ແລະ ເຫັດໄດ້ໃຊ້ຊີວິດຢູ່ໃນຄວາມເປັນຊະ
ເລີຍຕະຫລອດວັນເວລາຂອງລາວ. ແລະ
ເຫັດມີລູກຊື່ວ່າ ອາໂຮນ, ແລະ ອາໂຮນ
ໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດ
ວັນເວລາຂອງລາວຄືກັນ; ແລະ ລາວມີ
ລູກຊາຍຊື່ວ່າ ອາມນີແກດາ, ແລະ ອາມ
ນີແກດາກໍໄດ້ຢູ່ໃນຄວາມເປັນຊະເລີຍ
ຕະຫລອດວັນເວລາຂອງລາວຄືກັນ; ແລະ
ລາວມີລູກຊາຍຊື່ວ່າ ໂຄຣິອານທຳ, ແລະ
ໂຄຣິອານທຳກໍໄດ້ຢູ່ໃນຄວາມເປັນຊະເລີຍ
ຕະຫລອດວັນເວລາຂອງລາວຄືກັນ; ແລະ
ລາວມີລູກຊາຍຊື່ວ່າ ຄອມ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື
ຄອມໄດ້ຍຶດເອົາອານາຈັກໄປເຄິ່ງໜຶ່ງ.
ແລະ ລາວໄດ້ປົກຄອງອານາຈັກສ່ວນນັ້ນ
ເປັນເວລາສີ່ສິບສອງປີ; ແລະ ລາວໄດ້ໄປ
ສູ້ຮົບກັບກະສັດອາມກິດ, ແລະ ທັງສອງໄດ້
ຕໍ່ສູ້ກັນເປັນເວລາຫລາຍປີ ຊຶ່ງລະຫວ່າງ
ເວລານັ້ນຄອມໄດ້ມີອຳນາດເໜືອອາມກິດ,
ແລະ ໄດ້ຍຶດເອົາອານາຈັກສ່ວນທີ່ເຫລືອຢູ່
ມາເປັນເຈົ້າຂອງ.
33 ແລະ ໃນວັນເວລາຂອງຄອມ ມັນເລີ່ມ
ມີພວກໂຈນຢູ່ໃນແຜ່ນດິນ; ແລະ ພວກເຂົາ
ເຫລົ່ານັ້ນໄດ້ນຳເອົາແຜນເກົ່າມາໃຊ້, ແລະ
ໄດ້ເອົາ [ກ]ຄຳສາບານຕາມວິທີຂອງຄົນສະ
ໄໝບູຮານ, ແລະ ພະຍາຍາມທີ່ຈະທຳລາຍ
ອານາຈັກອີກ.
34 ບັດນີ້ຄອມໄດ້ຕໍ່ສູ້ກັບພວກເຂົາຢ່າງ
ໜັກ; ເຖິງຢ່າງໃດກໍຕາມ, ລາວກໍຍັງເອົາ
ຊະນະພວກເຂົາບໍ່ໄດ້.

## ບົດທີ 11

*ສົງຄາມ, ການແຕກແຍກ, ແລະ ຄວາມ
ຊົ່ວຮ້າຍຄອບງຳຊີວິດຂອງຊາວຢາເຣັດ—
ສາດສະດາໃຫ້ຖ້ອຍຄຳເຖິງການທຳລາຍ
ຂອງຊາວຢາເຣັດເວັ້ນເສຍແຕ່ພວກເຂົາ
ຈະກັບໃຈເສຍກ່ອນ—ຜູ້ຄົນບໍ່ຍອມຮັບຟັງ
ຄຳຂອງສາດສະດາ.*

1 ແລະ ໃນວັນເວລາຂອງຄອມ ໄດ້ມີ
ສາດສະດາຫລາຍທ່ານອີກ, ແລະ ໄດ້ທຳ
ນາຍເຖິງຄວາມພິນາດອັນໃຫຍ່ຫລວງ
ຂອງຜູ້ຄົນ ຖ້າຫາກພວກເຂົາບໍ່ກັບໃຈ,
ແລະ ຫັນໄປຫາພຣະຜູ້ເປັນເຈົ້າ, ແລະ ປະ
ຖິ້ມການຄາດຕະກຳ, ແລະ ຄວາມຊົ່ວຮ້າຍ
ຂອງພວກເຂົາ.
2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນ
ບໍ່ຍອມຮັບຟັງຄຳຂອງສາດສະດາ, ແລະ
ພວກເພິ່ນໄດ້ໜີໄປຫາຄອມເພື່ອຄວາມ
ປອດໄພ, ເພາະວ່າຜູ້ຄົນພະຍາຍາມທີ່ຈະ
ທຳລາຍພວກເພິ່ນ.
3 ແລະ ພວກເພິ່ນໄດ້ທຳນາຍຫລາຍ

33 *ກ* ຄມພ ການມົ້ວສຸມລັບ; ຄຳສາບານ.

ເລື່ອງ ແກ່ຄອມ; ແລະ ລາວ ໄດ້ ຮັບ ພອນ
ຕະຫລອດວັນເວລາທີ່ເຫລືອຢູ່ຂອງລາວ.

4 ແລະ ລາວ ໄດ້ ມີຊີວິດຢູ່ຢ່າງດົນນານ,
ແລະ ໄດ້ມີລູກຊາຍຊື່ວ່າ ຊິບລຳ; ແລະ ຊິບ
ລຳໄດ້ຂຶ້ນປົກຄອງແທນ. ແລະ ນ້ອງຊາຍ
ຂອງຊິບລຳໄດ້ກະບົດຕໍ່ລາວ, ແລະ ເລີ່ມມີ
ສົງຄາມໃຫຍ່ທີ່ສຸດທົ່ວແຜ່ນດິນ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງຊິບລຳໃຫ້ຂ້າສາດສະດາທັງໝົດ
ຊຶ່ງໄດ້ທຳນາຍ ເຖິງຄວາມພິນາດຂອງຜູ້
ຄົນ;

6 ແລະ ມັນໄດ້ມີຄວາມສູນເສຍອັນໃຫຍ່
ຫລວງທົ່ວແຜ່ນດິນ, ເພາະພວກເພິ່ນໄດ້
ໃຫ້ ຖ້ອຍຄຳວ່າ ຄຳສາບ ແຊ່ງອັນໃຫຍ່
ຫລວງຈະມາສູ່ແຜ່ນດິນ, ແລະ ມາສູ່ຜູ້ຄົນ
ນຳອີກ, ແລະ ວ່າມັນຈະມີຄວາມພິນາດອັນ
ໃຫຍ່ຫລວງໃນບັນດາພວກເຂົາທີ່ບໍ່ເຄີຍມີ
ມາກ່ອນໃນພື້ນແຜ່ນດິນໂລກເລີຍ, ແລະ
ວ່າກະດູກຂອງພວກເຂົາກະຈາຍ [ກ]ກອງ
ກັນຂຶ້ນເທິງແຜ່ນດິນ ຖ້າຫາກພວກເຂົາບໍ່
ກັບໃຈຈາກຄວາມຊົ່ວຮ້າຍຂອງພວກເຂົາ
ເສຍກ່ອນ.

7 ແລະ ພວກເຂົາບໍ່ໄດ້ເຊື່ອຟັງສຸລະສຽງ
ຂອງພຣະຜູ້ເປັນເຈົ້າເລີຍ, ຍ້ອນວ່າການ
ມົ້ວສຸມລັບອັນຊົ່ວຮ້າຍຂອງພວກເຂົາ; ດັ່ງ
ນັ້ນ ມັນຈຶ່ງເລີ່ມມີສົງຄາມ ແລະ ມີການ
ຂັດແຍ້ງກັນຂຶ້ນທົ່ວແຜ່ນດິນ, ແລະ ມັນມີ
ຄວາມອຶດຢາກ ແລະ ພະຍາດໂລຄາຢ່າງ
ຫລວງຫລາຍນຳອີກ ເຖິງຂະໜາດທີ່ມັນ
ໄດ້ມີຄວາມພິນາດອັນໃຫຍ່ຫລວງຢ່າງທີ່
ບໍ່ເຄີຍເຫັນມາກ່ອນໃນພື້ນແຜ່ນດິນໂລກ;
ແລະ ທັງໝົດນີ້ເກີດຂຶ້ນໃນວັນເວລາຂອງ
ຊິບລຳ.

8 ແລະ ຜູ້ຄົນເລີ່ມກັບໃຈຈາກຄວາມຊົ່ວ
ຮ້າຍຂອງພວກເຂົາ; ແລະ ຕາບໃດທີ່ພວກ
ເຂົາກັບໃຈ ພຣະຜູ້ເປັນເຈົ້າຍັງມີ [ກ]ເມດຕາ
ຕໍ່ພວກເຂົາຢູ່ສະເໝີ.

9 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊິບ
ລຳຖືກຂ້າ, ແລະ ເຊດຖືກຈັບໄປເປັນຊະ
ເລີຍ, ແລະ ໄດ້ຢູ່ໃນຄວາມເປັນຊະເລີຍ
ຕະຫລອດວັນເວລາຂອງລາວ.

10 ແລະ ເຫດການໄດ້ບັງເກີດຂຶ້ນຄື ເອ
ຫາ ລູກຊາຍຂອງລາວໄດ້ຮັບອານາຈັກມາ
ປົກຄອງແທນ; ແລະ ລາວໄດ້ປົກຄອງຜູ້ຄົນ
ຕະຫລອດວັນເວລາຂອງລາວ. ແລະ ລາວ
ໄດ້ເຮັດຄວາມຊົ່ວຮ້າຍນາໆປະການໃນ
ວັນເວລາຂອງລາວ, ຊຶ່ງດ້ວຍເຫດນີ້ ມັນຈຶ່ງ
ໄດ້ເຮັດໃຫ້ເກີດການຂ້າຟັນກັນຢ່າງໜັກ
ໃນເວລາອັນສັ້ນໆຂອງລາວ.

11 ແລະ ອີເທັມ, ໂດຍທີ່ເປັນຜູ້ສືບຕະ
ກຸນຂອງເອຫາ, ຈຶ່ງໄດ້ຮັບອານາຈັກມາປົກ
ຄອງ; ແລະ ລາວໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນ
ວັນເວລາຂອງລາວຄືກັນ.

12 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ວັນເວລາຂອງອີເທັມ, ໄດ້ມີສາດສະດາ
ຫລາຍທ່ານມາທຳນາຍແກ່ຜູ້ຄົນອີກ; ແທ້
ຈິງແລ້ວ, ພວກເພິ່ນໄດ້ທຳນາຍວ່າ ພຣະຜູ້
ເປັນເຈົ້າຈະທຳລາຍພວກເຂົາໃຫ້ໝົດສິ້ນ
ໄປຈາກພື້ນແຜ່ນດິນໂລກຖ້າຫາກພວກ
ເຂົາບໍ່ກັບໃຈຈາກຄວາມຊົ່ວຮ້າຍຂອງ
ພວກເຂົາເສຍກ່ອນ.

13 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້
ຄົນໄດ້ເຮັດໃຈແຂງກະດ້າງ, ແລະ ບໍ່ຍອມ
[ກ]ເຊື່ອຟັງຄຳຂອງພວກເພິ່ນເລີຍ; ແລະ
ສາດສະດາໂສກເສົ້າ ແລະ ໄດ້ອອກໄປ
ຈາກບັນດາຜູ້ຄົນ.

14 ແລະ ເຫດການໄດ້ບັງເກີດຂຶ້ນຄື ອີ
ເທັມໄດ້ດຳເນີນການຕັດສິນດ້ວຍຄວາມ

**11** 6 *ກ* ອມນ 1:22; ອທ 14:21.
8 *ກ* ຄນພ ເມດຕາ, ມີເມດຕາ, ຄວາມເມດຕາ.
13 *ກ* ມຊຢ 16:2.

ຊົ່ວຮ້າຍຕະຫລອດວັນເວລາທັງໝົດຂອງລາວ; ແລະ ລາວໄດ້ມີລູກຊາຍຊື່ວ່າ ໂມຣັນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມຣັນໄດ້ຂຶ້ນປົກຄອງແທນ ແລະ ໂມຣັນໄດ້ເຮັດສິ່ງທີ່ຊົ່ວຮ້າຍຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໄດ້ເກີດມີ [ກ]ການກະບົດຂຶ້ນໃນບັນດາຜູ້ຄົນ, ຍ້ອນວ່າການມົ້ວສຸມລັບ ນັ້ນຊຶ່ງສ້າງຂຶ້ນເພື່ອຫາອຳນາດ ແລະ ຫາຜົນປະໂຫຍດ; ແລະ ເກີດມີຜູ້ໜຶ່ງທີ່ຍິ່ງໃຫຍ່ໃນຄວາມຊົ່ວຮ້າຍໃນບັນດາພວກເຂົາ, ແລະ ໄດ້ສູ້ຮົບກັບໂມຣັນ, ຊຶ່ງດ້ວຍເຫດນີ້ລາວຈຶ່ງໄດ້ໂຄ່ນລົ້ມອານາຈັກໄປເຄິ່ງໜຶ່ງ; ແລະ ລາວໄດ້ປົກຄອງອານາຈັກເຄິ່ງນັ້ນເປັນເວລາຫລາຍປີ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມຣັນໄດ້ໂຄ່ນລົ້ມຄືນ, ແລະ ໄດ້ຍຶດເອົາອານາຈັກຄືນມາອີກ.

17 ແລະ ເຫດການໄດ້ບັງເກີດຂຶ້ນຄື ມີຄົນໜຶ່ງອີກທີ່ຍິ່ງໃຫຍ່; ແລະ ລາວເປັນຜູ້ສືບຕະກຸນຂອງນ້ອງຊາຍຂອງຢາເຣັດ.

18 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ໂຄ່ນລົ້ມໂມຣັນ ແລະ ຍຶດເອົາອານາຈັກ; ດັ່ງນັ້ນ, ໂມຣັນຈຶ່ງໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາທີ່ເຫລືອຢູ່ຂອງລາວ; ແລະ ລາວໄດ້ມີລູກຊາຍຊື່ວ່າ ໂຄຣິອານທຳ.

19 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທຳໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວ.

20 ແລະ ໃນວັນເວລາຂອງໂຄຣິອານທຳໄດ້ມີສາດສະດາຫລາຍທ່ານມາທຳນາຍເຖິງເລື່ອງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນອີກ, ແລະ ໄດ້ປ່າວປະກາດການກັບໃຈຕໍ່ຜູ້ຄົນ, ແລະ ຖ້າຫາກພວກເຂົາບໍ່ກັບໃຈ ອົງພຣະຜູ້ເປັນເຈົ້າຈະດຳເນີນ [ກ]ການພິພາກສາພວກເຂົາ ຈົນເຖິງຄວາມພິນາດທັງໝົດຂອງພວກເຂົາ;

21 ແລະວ່າອົງພຣະຜູ້ເປັນເຈົ້າຈະສົ່ງ ຫລື ນຳເອົາ [ກ]ຄົນອື່ນມາເປັນເຈົ້າຂອງແຜ່ນດິນໂດຍອຳນາດຂອງພຣະອົງ, ຕາມວິທີທີ່ພຣະອົງນຳເອົາບັນພະບຸລຸດຂອງພວກເຂົາມານັ້ນ.

22 ແລະ ພວກເຂົາບໍ່ໄດ້ຍອມຮັບຄຳທັງໝົດຂອງສາດສະດາເລີຍ, ຍ້ອນວ່າສັງຄົມລັບ ແລະ ຄວາມໜ້າກຽດຊັງອັນຊົ່ວຮ້າຍຂອງພວກເຂົາ.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທຳໄດ້ມີລູກຊາຍຊື່ວ່າ [ກ]ອີເທີ, ແລະ ລາວໄດ້ສິ້ນຊີວິດໄປ, ໂດຍຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວ.

## ບົດທີ 12

*ສາດສະດາອີເທີຊັກຊວນໃຫ້ຜູ້ຄົນເຊື່ອໃນພຣະເຈົ້າ—ໂມໂຣໄນເວົ້າຢ້ຳເຖິງການແປກປະຫລາດ ແລະ ສິ່ງອັດສະຈັນທີ່ເຮັດໄດ້ດ້ວຍສັດທາ—ສັດທາເຮັດໃຫ້ນ້ອງຊາຍຂອງຢາເຣັດສາມາດເຫັນພຣະຄຣິດ—ພຣະຜູ້ເປັນເຈົ້າມອບຄວາມອ່ອນແອໃຫ້ມະນຸດເພື່ອບາງທີເຂົາອາດຈະຖ່ອມຕົວລົງ—ນ້ອງຊາຍຂອງຢາເຣັດຍ້າຍພູຊີຣິນໄດ້ດ້ວຍສັດທາ—ສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນເປັນສິ່ງຈຳເປັນຕໍ່ຄວາມລອດ—ໂມໂຣໄນເຫັນພຣະເຢຊູໜ້າຕໍ່ໜ້າ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ອີເທີມີຊີວິດຢູ່ໃນວັນເວລາຂອງ [ກ]ໂຄຣິອານທະ

15 *ກ* ຄມພ ກະບົດ, ການກະບົດ.
20 *ກ* ຄມພ ພິພາກສາ, ການພິພາກສາ, ຜູ້ພິພາກສາ.
21 *ກ* ອທ 13:20–21.
23 *ກ* ອທ 1:6; 15:33–34.
**12** 1 *ກ* ອທ 13:13–31.

ເມີ; ແລະ ໂຄຣິອານທະເມີເປັນກະສັດປົກ
ຄອງທົ່ວແຜ່ນດິນ.
2 ແລະ ກອີເທີເປັນສາດສະດາຂອງພຣະ
ຜູ້ເປັນເຈົ້າ; ດັ່ງນັ້ນ ອີເທີຈຶ່ງໄດ້ອອກມາໃນ
ວັນເວລາຂອງໂຄຣິອານທະເມີ, ແລະ ໄດ້
ເລີ່ມທຳນາຍແກ່ຜູ້ຄົນ, ເພາະວ່າຈະ ຂຫ້າມ
ເພິ່ນບໍ່ໄດ້ຍ້ອນ ພຣະວິນຍານຂອງພຣະຜູ້
ເປັນເຈົ້າ ຊຶ່ງສະຖິດຢູ່ກັບເພິ່ນ.
3 ເພາະວ່າເພິ່ນໄດ້ ກປ່າວປະກາດຕັ້ງ
ແຕ່ຕອນເຊົ້າຈົນຮອດຕາເວັນຕົກດິນ,
ແລະ ຊັກຊວນຜູ້ຄົນໃຫ້ເຊື່ອໃນພຣະເຈົ້າ
ເພື່ອຈະນຳໄປສູ່ການກັບໃຈ ຖ້າບໍ່ດັ່ງນັ້ນ
ພວກເຂົາຈະຖືກ ຂທຳລາຍ, ໂດຍກ່າວກັບ
ພວກເຂົາວ່າ ດ້ວຍ ຄສັດທາ ທຸກສິ່ງທຸກ
ຢ່າງຍ່ອມສຳເລັດ—
4 ດັ່ງນັ້ນ, ຜູ້ໃດທີ່ເຊື່ອໃນພຣະເຈົ້າ ຜູ້
ນັ້ນອາດຈະ ກມຸ້ງຫວັງຢ່າງແນ່ນອນສຳລັບ
ໂລກທີ່ຈະດີກວ່ານີ້, ແທ້ຈິງແລ້ວ, ແມ່ນ
ທາງເບື້ອງຂວາພຣະຫັດຂອງພຣະເຈົ້າ,
ຊຶ່ງຄວາມຫວັງນີ້ມາຈາກສັດທາອັນເຮັດ
ຂຫລັກໝັ້ນໃຫ້ແກ່ຈິດວິນຍານຂອງມະນຸດ,
ຊຶ່ງຈະເຮັດໃຫ້ເຂົາແນ່ໃຈ ແລະ ແນ່ວແນ່,
ຄເຮັດວຽກງານດີໃຫ້ຫລາຍຢູ່ສະເໝີ, ອັນ
ຈະນຳໄປຫາ ງການຖວາຍບາລະມີແດ່
ພຣະເຈົ້າ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ອີເທີ
ໄດ້ທຳນາຍເລື່ອງທີ່ຍິ່ງໃຫຍ່ ແລະ ໜ້າອັດ
ສະຈັນແກ່ຜູ້ຄົນ, ຊຶ່ງພວກເຂົາບໍ່ເຊື່ອຍ້ອນ
ວ່າພວກເຂົາບໍ່ເຫັນມັນ.
6 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນຈະ
ເວົ້າບາງຢ່າງກ່ຽວກັບສິ່ງເຫລົ່ານີ້; ຂ້າພະ
ເຈົ້າຈະສະແດງຕໍ່ໂລກວ່າ ກສັດທາຄືສິ່ງທີ່
ຂມຸ້ງຫວັງໄວ້ ແລະ ຍັງ ຄບໍ່ທັນເຫັນ; ດັ່ງນັ້ນ
ຈຶ່ງຢ່າໄດ້ໂຕ້ຖຽງກັນເລີຍ, ເພາະທ່ານບໍ່
ເຫັນຍ້ອນວ່າທ່ານຈະບໍ່ໄດ້ຮັບພະຍານຈົນ
ກວ່າຫລັງຈາກ ງການທົດລອງສັດທາຂອງ
ທ່ານ.
7 ເພາະເປັນດ້ວຍສັດທາທີ່ພຣະຄຣິດໄດ້
ມາປະກົດຕົວແກ່ບັນພະບຸລຸດຂອງພວກ
ເຮົາ, ຫລັງຈາກພຣະອົງໄດ້ຟື້ນຄືນພຣະ
ຊົນແລ້ວ; ແລະ ພຣະອົງຈະບໍ່ປະກົດຕົວ
ແກ່ພວກເຂົາ ຈົນກວ່າຫລັງຈາກພວກເຂົາ
ມີສັດທາໃນພຣະອົງແລ້ວ; ດັ່ງນັ້ນ, ມັນຈຶ່ງ
ຕ້ອງເປັນໄປວ່າ ບາງຄົນມີສັດທາໃນພຣະ
ອົງ, ເພາະວ່າພຣະອົງບໍ່ໄດ້ປະກົດຕົວແກ່
ໂລກ.
8 ແຕ່ເປັນຍ້ອນສັດທາຂອງມະນຸດ ພຣະ
ອົງ ຈຶ່ງຈະມາປະກົດຕົວ ແກ່ໂລກ, ແລະ
ຖວາຍບາລະມີພຣະນາມ ຂອງພຣະບິດາ,
ແລະ ຕຽມທາງໄວ້ເພື່ອໂດຍທາງນັ້ນ ຜູ້
ອື່ນຈະໄດ້ມີສ່ວນໃນຂອງປະທານຈາກ
ສະຫວັນ, ເພື່ອເຂົາຈະໄດ້ຫວັງໃນສິ່ງ
ເຫລົ່ານັ້ນ ຊຶ່ງພວກເຂົາຍັງບໍ່ທັນເຫັນເທື່ອ.
9 ດັ່ງນັ້ນ, ທ່ານຈະມີຄວາມຫວັງອີກ,
ແລະ ເປັນຜູ້ມີສ່ວນໃນຂອງປະທານນັ້ນ,
ຖ້າພຽງແຕ່ທ່ານມີສັດທາ.
10 ຈົ່ງເບິ່ງ ເປັນດ້ວຍສັດທາຄົນໃນສະ
ໄໝກ່ອນ ຈຶ່ງຖືກ ກເອີ້ນຕາມລະບຽບອັນ
ສັກສິດຂອງພຣະເຈົ້າ.
11 ດັ່ງນັ້ນ, ດ້ວຍ ສັດທາ ພຣະ ອົງ ຈຶ່ງ

2 ກ ຄນພ ອີເທີ.
ຂ ຢມຢ 20:9;
ອນ 1:26;
ແອວ 43:1.
3 ກ ຄພ 112:5.
ຂ ອທ 11:12, 20–22.
ຄ ຄນພ ສັດທາ.
4 ກ ຄນພ ຫວັງ, ຄວາມຫວັງ.
ຂ ຮຣ 6:19.
ຄ 1 ກຣທ 15:58.
ງ 3 ນຟ 12:16.
6 ກ ຮຣ 11:1.
ຂ ຣມ 8:24–25.
ຄ ແອວ 32:21.
ງ 3 ນຟ 26:11;
ຄພ 105:19; 121:7–8.
10 ກ ແອວ 13:3–4.
ຄນພ ເອີ້ນ, ການ
ເອີ້ນ, ຖືກເອີ້ນຈາກ
ພຣະເຈົ້າ, ຕຳແໜ່ງ.

ປະທານກົດຂອງໂມເຊໃຫ້. ແຕ່ດ້ວຍຂອງປະທານຂອງພຣະບຸດຂອງພຣະອົງ ພຣະເຈົ້າຈຶ່ງໄດ້ຕຽມເສັ້ນທາງ [ກ]ອັນປະເສີດທີ່ສຸດໃຫ້; ແລະ ເປັນດ້ວຍສັດທາມັນຈຶ່ງສຳເລັດ.

12 ເພາະຖ້າຫາກບໍ່ມີ [ກ]ສັດທາໃນບັນດາລູກຫລານມະນຸດ ພຣະເຈົ້າຈະເຮັດ [ຂ]ສິ່ງມະຫັດສະຈັນໃນບັນດາພວກເຂົາບໍ່ໄດ້; ດັ່ງນັ້ນ ພຣະອົງຈຶ່ງບໍ່ປະກົດຕົວຈົນກວ່າຫລັງຈາກທີ່ພວກເຂົາມີສັດທາ.

13 ຈົ່ງ ເບິ່ງ, ມັນ ແມ່ນ ສັດທາ ຂອງແອວມາ ແລະ ແອມມິວເລັກທີ່ເຮັດໃຫ້ [ກ]ຄຸກພັງທະລາຍລົງພື້ນດິນ.

14 ຈົ່ງເບິ່ງ, ມັນແມ່ນສັດທາຂອງນີໄຟ ແລະ ລີໄຮທີ່ເຮັດໃຫ້ເກີດການ [ກ]ປ່ຽນແປງກັບຊາວເລມັນ, ຈົນວ່າພວກເຂົາໄດ້ຮັບບັບຕິສະມາດ້ວຍໄຟ ແລະ ດ້ວຍ [ຂ]ພຣະວິນຍານບໍລິສຸດ.

15 ຈົ່ງ ເບິ່ງ, ມັນ ແມ່ນ ສັດທາ ຂອງ [ກ]ອຳໂມນ ແລະ ພີ່ນ້ອງຂອງລາວ ຊຶ່ງໄດ້ [ຂ]ເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນນີ້ໃນບັນດາຊາວເລມັນ.

16 ແທ້ຈິງແລ້ວ, ແລະ ຄົນທັງປວງທີ່ເຮັດ [ກ]ສິ່ງມະຫັດສະຈັນກໍເຮັດດ້ວຍ [ຂ]ສັດທາ, ເຖິງແມ່ນຜູ້ທີ່ເປັນຢູ່ມາກ່ອນພຣະຄຣິດ ແລະ ຜູ້ທີ່ເປັນຢູ່ພາຍຫລັງພຣະຄຣິດກໍຄືກັນ.

17 ແລະ ມັນເປັນຍ້ອນສັດທາທີ່ສານຸສິດສາມຄົນໄດ້ຮັບສັນຍາວ່າ ພວກເພິ່ນ [ກ]ບໍ່ຈຳເປັນຕ້ອງຊີມລົດຊາດຂອງຄວາມຕາຍເລີຍ; ແລະ ພວກເພິ່ນບໍ່ໄດ້ຮັບສັນຍານີ້ຈົນກວ່າຫລັງຈາກພວກເພິ່ນມີສັດທາ.

18 ແລະ ທັງບໍ່ວ່າເວລາໃດກໍຕາມ ຈະບໍ່ມີຜູ້ໃດສາມາດເຮັດສິ່ງມະຫັດສະຈັນໄດ້ເລີຍຈົນກວ່າຜູ້ນັ້ນຈະມີສັດທາເສຍກ່ອນ; ດັ່ງນັ້ນ ກ່ອນອື່ນໝົດເຂົາຕ້ອງເຊື່ອໃນພຣະບຸດຂອງພຣະເຈົ້າເສຍກ່ອນ.

19 ແລະ ມີຫລາຍຄົນທີ່ມີສັດທາອັນແຮງກ້າ, ແມ່ນແຕ່ [ກ]ກ່ອນພຣະຄຣິດສະເດັດມາ, ຜູ້ບໍ່ສາມາດຖືກກີດກັນຈາກພາຍໃນ [ຂ]ມ່ານ, ແຕ່ໄດ້ເຫັນດ້ວຍຕາຂອງຕົນເອງ ຊຶ່ງສິ່ງເຫລົ່ານັ້ນ ພວກເຂົາໄດ້ເຫັນແລ້ວດ້ວຍຕາແຫ່ງສັດທາ, ແລະ ພວກເຂົາກໍພໍໃຈ.

20 ແລະ ຈົ່ງເບິ່ງ, ພວກເຮົາເຫັນໃນບັນທຶກນີ້ວ່າ ຄົນຜູ້ໜຶ່ງໃນຈຳນວນຄົນເຫລົ່ານີ້ຄືນ້ອງຊາຍຂອງຢາເຣັດ; ຍ້ອນວ່າລາວມີສັດທາອັນຍິ່ງໃຫຍ່ທີ່ສຸດໃນພຣະເຈົ້າ, ເວລາພຣະເຈົ້າເດ່ [ກ]ນິ້ວພຣະຫັດອອກມາພຣະອົງຈຶ່ງບໍ່ສາມາດເຊື່ອງມັນໄວ້ໃຫ້ພົ້ນຈາກສາຍຕາຂອງນ້ອງຊາຍຂອງຢາເຣັດໄດ້, ເພາະດ້ວຍພຣະຄຳຂອງພຣະອົງທີ່ຮັບສັ່ງກັບລາວ ຊຶ່ງຄຳນັ້ນລາວໄດ້ຮັບມາໂດຍສັດທາ.

21 ແລະ ຫລັງ ຈາກ ນ້ອງ ຊາຍ ຂອງຢາເຣັດເຫັນນິ້ວພຣະຫັດຂອງພຣະຜູ້ເປັນເຈົ້າແລ້ວ, ເປັນເພາະ [ກ]ສັນຍາທີ່ນ້ອງຊາຍຂອງຢາເຣັດໄດ້ຮັບມາໂດຍສັດທາ, ພຣະຜູ້ເປັນເຈົ້າຈຶ່ງບໍ່ສາມາດບັງສິ່ງໃດໃຫ້ພົ້ນຈາກສາຍຕາຂອງລາວໄດ້; ດັ່ງນັ້ນ ພຣະ

11 ກ 1 ກຣທ 12:31.
12 ກ 2 ນຟ 27:23; ມຊຢ 8:18; ມຣນ 7:37; ຄພ 35:8–11.
ຂ ມທ 13:58; ມມ 9:20.
13 ກ ແອວ 14:26–29.
14 ກ ຮລມ 5:50–52.
ຂ ຮລມ 5:45; 3 ນຟ 9:20.
15 ກ ແອວ 17:29–39.
ຂ ອສ ຕາມທີ່ໄດ້ບອກເລົ່າ ໃນ ແອວ 17–26.
16 ກ ຄນພ ມະຫັດສະຈັນ, ການມະຫັດສະຈັນ.
ຂ ຮຣ 11:7–40.
17 ກ 3 ນຟ 28:7; ມມ 8:10–12.
19 ກ 2 ນຟ 11:1–4; ຢຄ 4:4–5; ຈຣ 1:11; ແອວ 25:15–16.
ຂ ອທ 3:6. ຄນພ ມ່ານ.
20 ກ ອທ 3:4.
21 ກ ອທ 3:25–26.

ອົງ ຈຶ່ງ ສະແດງ ທຸກ ສິ່ງ ທຸກ ຢ່າງ ແກ່ ລາວ,
ເພາະພຣະອົງບໍ່ສາມາດກີດກັນລາວໃຫ້ຢູ່
ນອກ [ຂ]ມ່ານອີກຕໍ່ໄປ.

22 ແລະ ເປັນ ດ້ວຍ ສັດທາ ທີ່ ບັນ ພະ ບຸ
ລຸດຂອງຂ້າພະເຈົ້າໄດ້ຮັບ [ກ]ສັນຍາວ່າ ສິ່ງ
ເຫລົ່ານີ້ຈະ ມາ ຫາ ພີ່ ນ້ອງ ຂອງ ພວກ ເຂົາ
ໂດຍ ຜ່ານ ຄົນ ຕ່າງ ຊາດ; ສະນັ້ນ ພຣະ
ຜູ້ເປັນເຈົ້າ ຈຶ່ງ ບັນຊາ ຂ້າພະເຈົ້າ; ແທ້ຈິງ
ແລ້ວ, ຄືພຣະເຢຊູຄຣິດ.

23 ແລະ ຂ້າພະເຈົ້າທູນຕໍ່ພຣະອົງວ່າ:
ພຣະອົງເຈົ້າເອີຍ, ຄົນຕ່າງຊາດຈະເຍາະ
ເຍີ້ຍສິ່ງເຫລົ່ານີ້, ເພາະ [ກ]ຄວາມອ່ອນແອ
ຂອງການຂຽນຂອງພວກຂ້ານ້ອຍ; ເພາະ
ພຣະອົງເຈົ້າເອີຍ ພຣະອົງໄດ້ເຮັດໃຫ້ພວກ
ຂ້ານ້ອຍ [ຂ]ຍິ່ງໃຫຍ່ໃນຄຳເວົ້າໂດຍສັດທາ,
ແຕ່ພຣະອົງບໍ່ໄດ້ເຮັດໃຫ້ພວກຂ້ານ້ອຍຍິ່ງ
ໃຫຍ່ໃນການຂຽນ; ເພາະພຣະອົງເຮັດໃຫ້
ຜູ້ຄົນພວກນີ້ເວົ້າໄດ້ຫລາຍເພາະພຣະວິນ
ຍານບໍລິສຸດຊຶ່ງພຣະອົງໄດ້ປະທານໃຫ້ແກ່
ພວກເຂົາ;

24 ແລະ ພຣະ ອົງ ໄດ້ ເຮັດ ໃຫ້ ພວກ ຂ້າ
ນ້ອຍຂຽນໄດ້ພຽງໜ້ອຍດຽວ, ເພາະຄວາມ
ບໍ່ຊຳນິຊຳນານຂອງມືຂອງພວກຂ້ານ້ອຍ.
ຈົ່ງ ເບິ່ງ, ພຣະ ອົງບໍ່ ໄດ້ ເຮັດ ໃຫ້ພວກຂ້າ
ນ້ອຍຍິ່ງໃຫຍ່ໃນ [ກ]ການຂຽນຄືກັນກັບນ້ອງ
ຊາຍຂອງຢາເຣັດ, ເພາະພຣະອົງເຮັດໃຫ້
ເລື່ອງຊຶ່ງລາວຂຽນໄວ້ນັ້ນຍິ່ງໃຫຍ່ຄືກັນກັບ
ພຣະອົງ, ຈົນວ່າເກີນກຳລັງຂອງມະນຸດທີ່
ຈະອ່ານມັນໄດ້.

25 ພຣະ ອົງ ເຮັດ ໃຫ້ ຄຳ ເວົ້າ ຂອງ ພວກ
ຂ້ານ້ອຍມີອຳນາດ ແລະ ຍິ່ງໃຫຍ່ນຳອີກ,
ຈົນວ່າພວກຂ້ານ້ອຍຂຽນໄວ້ບໍ່ໄດ້; ດັ່ງນັ້ນ,
ເວລາພວກຂ້ານ້ອຍຂຽນ ພວກຂ້ານ້ອຍ
ຈຶ່ງເຫັນຄວາມອ່ອນແອຂອງຕົນ, ແລະ ສະ
ດຸດຍ້ອນວ່າການວາງຄຳເວົ້າຂອງພວກຂ້າ
ນ້ອຍ; ແລະ ຂ້ານ້ອຍຢ້ານວ່າຄົນຕ່າງຊາດ
ຈະ [ກ]ເຍາະເຍີ້ຍຄຳເວົ້າຂອງພວກຂ້ານ້ອຍ.

26 ແລະ ເວລາຂ້າພະເຈົ້າເວົ້າຂໍ້ຄວາມ
ນີ້ແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະ
ເຈົ້າວ່າ: ຄົນໂງ່ຈະ [ກ]ເຍາະເຍີ້ຍ, ແຕ່ວ່າເຂົາ
ຈະເປັນທຸກ; ແລະ ຄຸນງາມຄວາມດີຂອງ
ເຮົາມີພຽງພໍສຳລັບຄົນທີ່ອ່ອນໂຍນ, ເພື່ອ
ເຂົາຈະບໍ່ເອົາປຽບຄວາມອ່ອນແອຂອງ
ເຈົ້າ.

27 ແລະ ຖ້າຫາກມະນຸດມາຫາເຮົາ, ເຮົາ
ຈະສະແດງໃຫ້ເຂົາເຫັນ [ກ]ຄວາມອ່ອນແອ
ຂອງເຂົາ. ເຮົາຈະ [ຂ]ມອບຄວາມອ່ອນແອ
ໃຫ້ມະນຸດ ເພື່ອເຂົາຈະໄດ້ຖ່ອມຕົວ; ແລະ
[ຄ]ພຣະຄຸນຂອງເຮົາມີພຽງພໍສຳລັບຄົນທັງ
ປວງທີ່ [ງ]ຖ່ອມຕົວຕໍ່ໜ້າເຮົາ; ເພາະຖ້າຫາກ
ເຂົາຖ່ອມຕົວຕໍ່ໜ້າເຮົາ, ແລະ ມີສັດທາໃນ
ເຮົາ, ເວລານັ້ນເຮົາຈະເຮັດໃຫ້ສິ່ງທີ່ [ຈ]ອ່ອນ
ແອນັ້ນກັບມາເຂັ້ມແຂງສຳລັບເຂົາ.

28 ຈົ່ງເບິ່ງ, ເຮົາຈະສະແດງໃຫ້ຄົນຕ່າງ
ຊາດເຫັນຄວາມອ່ອນແອຂອງເຂົາ, ແລະ
ເຮົາຈະສະແດງໃຫ້ເຂົາເຫັນວ່າ [ກ]ສັດທາ,
ຄວາມຫວັງ, ແລະ ຄວາມໃຈບຸນຈະນຳ
ພວກເຂົາມາຫາເຮົາ—ຊຶ່ງເປັນອ່າງນ້ຳ
ແຫ່ງຄວາມຊອບທຳທັງປວງ.

29 ແລະ ຂ້າພະເຈົ້າໂມໂຣໄນເວລາໄດ້

21 *ຂ* ອທ 3:20;
ຄພ 67:10–13.
22 *ກ* ອນ 1:13.
23 *ກ* ມມ 8:17; 9:33.
*ຂ* 2 ນຟ 33:1.
24 *ກ* ຄມພ ພາສາ.
25 *ກ* 1 ກຣທ 2:14.
26 *ກ* ຄລຕ 6:7.
27 *ກ* ຢຄ 4:7.
*ຂ* ອພຍ 4:11;
1 ກຣທ 1:27.
*ຄ* ຄມພ ພຣະຄຸນ.
*ງ* ລກ 18:10–14;
ຄພ 1:28.
ຄມພ ຖ່ອມຕົນ,
ຄວາມຖ່ອມຕົນ.
*ຈ* ລກ 9:46–48;
2 ກຣທ 12:9.
28 *ກ* 1 ກຣທ 13;
ມຣນ 7:39–47.

ຍິນຂໍ້ຄວາມເຫລົ່ານີ້ແລ້ວ, ກໍສະບາຍໃຈ
ຂຶ້ນ, ແລະ ທູນວ່າ: ໂອ້ ພຣະຜູ້ເປັນເຈົ້າ,
ພຣະປະສົງອັນຊອບທຳຂອງພຣະອົງຈະ
ສຳເລັດ, ເພາະວ່າຂ້ານ້ອຍຮູ້ວ່າ ພຣະອົງ
ເຮັດວຽກງານໃຫ້ລູກຫລານມະນຸດຕາມ
ສັດທາຂອງເຂົາ;
30 ເພາະນ້ອງຊາຍຂອງຢາເຣັດເວົ້າກັບ
ພູຊີຣິນວ່າ, ຈົ່ງ ^ກ^ຍ້າຍໄປ—ແລະ ມັນກໍໄດ້
ຍ້າຍໄປ. ແລະ ຖ້າຫາກລາວບໍ່ມີສັດທາ ມັນ
ກໍຈະບໍ່ຍ້າຍໄປ; ດັ່ງນັ້ນ ພຣະອົງຈຶ່ງເຮັດ
ວຽກງານຫລັງຈາກທີ່ມະນຸດມີສັດທາ.
31 ເພາະວ່າພຣະອົງໄດ້ສະແດງພຣະ
ອົງເອງໃຫ້ປະຈັກແກ່ສານຸສິດຂອງພຣະ
ອົງຕາມນັ້ນ; ເພາະຫລັງຈາກທີ່ພວກເຂົາມີ
^ກ^ສັດທາ ແລະ ໄດ້ເວົ້າໃນພຣະນາມຂອງ
ພຣະອົງ, ພຣະອົງຈຶ່ງໄດ້ປະກົດຕົວຕໍ່ພວກ
ເຂົາດ້ວຍອຳນາດອັນຍິ່ງໃຫຍ່.
32 ແລະ ຂ້ານ້ອຍຈື່ໄດ້ອີກວ່າ ພຣະອົງ
ກ່າວວ່າ ພຣະອົງໄດ້ຕຽມທີ່ພັກໄວ້ໃຫ້ແກ່
ມະນຸດ, ແທ້ຈິງແລ້ວ, ແມ່ນໃນທ່າມກາງ
^ກ^ຜາສາດຂອງພຣະບິດາຂອງພຣະອົງ, ຊຶ່ງ
ໃນນັ້ນ ມະນຸດຈະໄດ້ມີ ^ຂ^ຄວາມຫວັງອັນປະ
ເສີດທີ່ສຸດ; ດັ່ງນັ້ນ ມະນຸດຈຶ່ງຕ້ອງມີຄວາມ
ຫວັງ, ຖ້າບໍ່ດັ່ງນັ້ນ ເຂົາຈະຮັບມູນມໍລະດົກ
ໃນບ່ອນທີ່ພຣະອົງຕຽມໄວ້ບໍ່ໄດ້.
33 ແລະ ອີກເທື່ອໜຶ່ງ, ຂ້ານ້ອຍຈື່ໄດ້ອີກ
ວ່າ ພຣະອົງກ່າວວ່າ ພຣະອົງ ^ກ^ຮັກໂລກ,
ຈົນຍອມເສຍສະລະພຣະຊົນເພື່ອໂລກ,
ເພື່ອພຣະອົງຈະໄດ້ຮັບພຣະຊົນຄືນອີກ
ເພື່ອຕຽມບ່ອນໄວ້ໃຫ້ລູກຫລານມະນຸດ.
34 ແລະ ບັດນີ້ຂ້ານ້ອຍຮູ້ວ່າ ^ກ^ຄວາມ
ຮັກນີ້ຊຶ່ງພຣະອົງມີຕໍ່ລູກຫລານມະນຸດເປັນ
ຄວາມໃຈບຸນ; ດັ່ງນັ້ນ, ຖ້າຫາກມະນຸດບໍ່
ມີຄວາມໃຈບຸນແລ້ວ ເຂົາຈະຮັບບ່ອນຊຶ່ງ
ພຣະອົງຕຽມໄວ້ໃນຜາສາດຂອງພຣະບິດາ
ຂອງພຣະອົງບໍ່ໄດ້.
35 ດັ່ງນັ້ນ, ຂ້ານ້ອຍຮູ້ຈັກສິ່ງເຫລົ່ານີ້ຊຶ່ງ
ພຣະອົງກ່າວ, ວ່າຖ້າຫາກຄົນຕ່າງຊາດບໍ່ມີ
ຄວາມໃຈບຸນ, ເພາະຄວາມອ່ອນແອຂອງ
ພວກຂ້ານ້ອຍ, ວ່າພຣະອົງຈະພິສູດເຂົາ,
ແລະ ເອົາ ^ກ^ພອນສະຫວັນໄປຈາກເຂົາ,
ແທ້ຈິງແລ້ວ, ເຖິງແມ່ນສິ່ງຊຶ່ງເຂົາໄດ້ຮັບ,
ແລະ ຈະມອບໃຫ້ແກ່ຜູ້ທີ່ຈະມີຄວາມໃຈ
ບຸນຢ່າງລົ້ນເຫລືອ.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ອະທິຖານຫາພຣະຜູ້ເປັນເຈົ້າຂໍ
ໃຫ້ພຣະອົງປະທານ ^ກ^ຄຸນງາມຄວາມດີໃຫ້
ແກ່ຄົນຕ່າງຊາດ, ເພື່ອພວກເຂົາຈະໄດ້ມີ
ຄວາມໃຈບຸນ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ:
ຖ້າຫາກພວກເຂົາບໍ່ມີຄວາມໃຈບຸນ ມັນກໍ
ບໍ່ສຳຄັນສຳລັບເຈົ້າ, ເຈົ້າເປັນຄົນຊື່ສັດ;
ດັ່ງນັ້ນ ອາພອນຂອງເຈົ້າຈຶ່ງຖືກຊຳລະລ້າງ
ໃຫ້ ^ກ^ຂາວສະອາດແລ້ວ. ແລະ ຍ້ອນວ່າ
ເຈົ້າເຫັນ ^ຂ^ຄວາມອ່ອນແອຂອງເຈົ້າເອງ,
ເຈົ້າຈຶ່ງຖືກເຮັດໃຫ້ເຂັ້ມແຂງຂຶ້ນ, ຈົນວ່າສາ
ມາດໄປນັ່ງລົງໃນບ່ອນ ຊຶ່ງເຮົາໄດ້ຕຽມໄວ້
ໃນຜາສາດຂອງພຣະບິດາຂອງເຮົາ.
38 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນຂໍ

30 *ກ* ມທ 17:20;
ຢຄ 4:6;
ຣລມ 10:6, 9.
ຄມພ ອຳນາດ.
31 *ກ* ຄມພ ສັດທາ.
32 *ກ* ຢຮ 14:2;
ອນ 1:27;
ຄພ 72:4; 98:18.
*ຂ* ຄມພ ຫວັງ, ຄວາມຫວັງ.
33 *ກ* ຢຮ 3:16–17.
34 *ກ* ມຣນ 7:47.
ຄມພ ໃຈບຸນ,
ຄວາມໃຈບຸນ;
ຮັກ, ຄວາມຮັກ.
35 *ກ* ມທ 25:14–30.
ຄມພ ຂອງປະທານ;
ຕາລັນຕົນ.
36 *ກ* ຄມພ ພຣະຄຸນ.
37 *ກ* ຄພ 38:42;
88:74–75; 135:4–5.
*ຂ* ອທ 12:27.

ກ່າວຄຳອຳລາຄົນຕ່າງຊາດ, ແທ້ຈິງແລ້ວ,
ແລະ ທັງພີ່ນ້ອງຂອງຂ້າພະເຈົ້າຜູ້ທີ່ຂ້າພະ
ເຈົ້າຮັກແພງນຳອີກ, ຈົນກວ່າພວກເຮົາຈະ
ພົບກັນອີກຕໍ່ໜ້າ [ກ]ບັນລັງພິພາກສາຂອງ
ພຣະຄຣິດ, ຊຶ່ງເປັນບ່ອນທີ່ຄົນທັງໝົດຈະ
ຮູ້ຈັກວ່າ [ຂ]ອາພອນຂອງຂ້າພະເຈົ້າບໍ່ມີຈຸດ
ດ່າງດຳດ້ວຍເລືອດຂອງທ່ານ.
39 ແລະ ເວລານັ້ນທ່ານຈະຮູ້ວ່າ ຂ້າພະ
ເຈົ້າໄດ້ [ກ]ເຫັນພຣະເຢຊູ, ແລະ ວ່າພຣະອົງ
ໄດ້ກ່າວກັບຂ້າພະເຈົ້າ [ຂ]ໜ້າຕໍ່ໜ້າ, ແລະ
ວ່າພຣະອົງໄດ້ກ່າວກັບຂ້າພະເຈົ້າດ້ວຍ
ຄວາມຖ່ອມຕົວຢ່າງງ່າຍດາຍ, ຄືກັນກັບ
ຄົນຜູ້ໜຶ່ງເວົ້າກັບຄົນອີກຜູ້ໜຶ່ງໃນພາສາ
ຂອງຂ້າພະເຈົ້າເອງກ່ຽວກັບເລື່ອງເຫລົ່ານີ້;
40 ແລະ ຂ້າພະເຈົ້າໄດ້ຂຽນໄວ້ພຽງ
ໜ້ອຍດຽວເທົ່ານັ້ນ, ເພາະຄວາມອ່ອນແອ
ໃນການຂຽນຂອງຂ້າພະເຈົ້າ.
41 ແລະ ບັດນີ້, ຂ້າພະເຈົ້າຂໍແນະນຳໃຫ້
ທ່ານ [ກ]ສະແຫວງຫາພຣະເຢຊູອົງນີ້ ຜູ້ຊຶ່ງ
ສາດສະດາ ແລະ ອັກຄະສາວົກໄດ້ຂຽນ
ໄວ້, ເພື່ອພຣະຄຸນຂອງພຣະເຈົ້າອົງເປັນ
ພຣະບິດາ, ແລະ ຂອງອົງພຣະເຢຊູຄຣິດ
ເຈົ້ານຳອີກ, ແລະ ພຣະວິນຍານບໍລິສຸດ
ຊຶ່ງ [ຂ]ເປັນພະຍານເຖິງພວກພຣະອົງ, ເພື່ອ
ຈະຢູ່ນຳ ແລະ ສະຖິດຢູ່ໃນທ່ານຕະຫລອດ
ໄປ. ອາແມນ.

## ບົດທີ 13

*ອີເທີເວົ້າກ່ຽວກັບເຢຣູຊາເລັມໃໝ່ທີ່ຈະຖືກສ້າງຂຶ້ນໃນອາເມຣິກາໂດຍລູກຫລານຂອງໂຢເຊັບ—ເພິ່ນທຳນາຍ, ຖືກຂັບໄລ່, ຂຽນປະຫວັດສາດຂອງຊາວຢາເຣັດໄວ້, ແລະບອກລ່ວງໜ້າເຖິງການທຳລາຍຂອງຊາວຢາເຣັດ—ສົງຄາມເກີດຂຶ້ນທົ່ວແຜ່ນດິນ.*

1 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນຈະ
ເລີ່ມເຮັດບັນທຶກຂອງຂ້າພະເຈົ້າໃຫ້ຈົບ ຊຶ່ງ
ມັນກ່ຽວກັບຄວາມພິນາດຂອງຜູ້ຄົນຜູ້ທີ່ຂ້າ
ພະເຈົ້າໄດ້ຂຽນມາ.
2 ເພາະຈົ່ງເບິ່ງ, ພວກເຂົາບໍ່ຍອມຮັບຄຳ
ທັງໝົດຂອງອີເທີ; ເພາະວ່າເພິ່ນໄດ້ບອກ
ພວກເຂົາແທ້ໆເຖິງເລື່ອງທັງໝົດນັບຕັ້ງແຕ່
ການເລີ່ມຕົ້ນຂອງມະນຸດເປັນຕົ້ນມາ; ແລະ
ວ່າຫລັງຈາກນ້ຳ [ກ]ແຫ້ງລົງຈາກແຜ່ນດິນນີ້
ແລ້ວ ມັນກໍກາຍມາເປັນແຜ່ນດິນທີ່ປະເສີດ
ເລີດລ້ຳກວ່າແຜ່ນດິນອື່ນໆທັງໝົດ, ເປັນ
ແຜ່ນດິນທີ່ພຣະຜູ້ເປັນເຈົ້າໄດ້ເລືອກໄວ້;
ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງມີພຣະປະສົງທີ່
ຈະໃຫ້ທຸກຄົນທີ່ຢູ່ໃນພື້ນແຜ່ນດິນນີ້ [ຂ]ຮັບ
ໃຊ້ພຣະອົງ;
3 ແລະ ວ່າ ມັນ ຈະ ເປັນ ບ່ອນ ຕັ້ງ ຂອງ
ເມືອງ [ກ]ເຢຣູຊາເລັມໃໝ່, ຊຶ່ງຈະ [ຂ]ລົງມາ
ຈາກສະຫວັນ, ແລະ ເປັນບ່ອນລີ້ໄພອັນ
ສັກສິດຂອງພຣະຜູ້ເປັນເຈົ້າ.
4 ຈົ່ງເບິ່ງ, ອີເທີໄດ້ເຫັນວັນເວລາຂອງ
ພຣະຄຣິດ, ແລະ ເພິ່ນໄດ້ເວົ້າກ່ຽວກັບ
ເມືອງ [ກ]ເຢຣູຊາເລັມໃໝ່ຢູ່ໃນແຜ່ນດິນນີ້.
5 ແລະ ເພິ່ນໄດ້ເວົ້າກ່ຽວກັບເຊື້ອສາຍ
ອິດສະຣາເອນນຳອີກ, ແລະ [ກ]ເຢຣູຊາເລັມ
ຊຶ່ງຈາກທີ່ນັ້ນ [ຂ]ລີໄຮຈະອອກມາ—ຫລັງ
ຈາກທີ່ມັນຖືກທຳລາຍແລ້ວ ມັນຈະຖືກ

38 *ກ* ຄມພ ພຣະເຢຊູ ຄຣິດ—ພິພາກສາ.
*ຂ* ຢຄ 1:19.
39 *ກ* ຄມພ ພຣະເຢຊູຄຣິດ—ການປະກົດຕົວຂອງພຣະຄຣິດຫລັງຈາກຊີວິດມະຕະ.
*ຂ* ປຖກ 32:30; ອພຍ 33:11.
41 *ກ* ຄພ 88:63; 101:38.
*ຂ* 3 ນຟ 11:32.
**13** 2 *ກ* ປຖກ 7:11–24; 8:3.
*ຂ* ອທ 2:8.
3 *ກ* 3 ນຟ 20:22; 21:23–24. ຄມພ ເຢຣູຊາເລັມໃໝ່.
*ຂ* ພນມ 3:12; 21:2.
4 *ກ* ຄມພ ຊີໂອນ.
5 *ກ* ຄມພ ເຢຣູຊາເລັມ.
*ຂ* 1 ນຟ 1:18–20.

ສ້າງຂຶ້ນຄືນອີກໃຫ້ເປັນ [ຄ]ນະຄອນສັກສິດ
ແດ່ພຣະຜູ້ເປັນເຈົ້າ ດັ່ງນັ້ນຈະເປັນເຢຣູ
ຊາເລັມໃໝ່ບໍ່ໄດ້ ເພາະວ່າມັນເປັນມາແລ້ວ
ໃນສະໄໝກ່ອນ; ແຕ່ວ່າມັນຈະຖືກສ້າງຄືນ
ອີກ, ແລະ ກາຍເປັນນະຄອນສັກສິດຂອງ
ພຣະຜູ້ເປັນເຈົ້າ; ແລະ ມັນຈະຖືກສ້າງໃຫ້
ແກ່ເຊື້ອສາຍອິດສະຣາເອນ—
6 ແລະ ວ່າເມືອງ [ກ]ເຢຣູຊາເລັມໃໝ່ຈະ
ຖືກສ້າງຂຶ້ນຢູ່ໃນແຜ່ນດິນນີ້ໃຫ້ແກ່ລູກ
ຫລານຂອງ [ຂ]ໂຢເຊັບທີ່ເຫລືອຢູ່, ຊຶ່ງສິ່ງ
ເຫລົ່ານີ້ມັນມີ [ຄ]ແບບຢ່າງມາແລ້ວ.
7 ເພາະວ່າດັ່ງທີ່ໂຢເຊັບໄດ້ນຳເອົາບິດາ
ຂອງເພິ່ນໄປຫາແຜ່ນດິນ [ກ]ເອຢິບ, ແລະ
ເພິ່ນໄດ້ຕາຍຢູ່ທີ່ນັ້ນ; ດັ່ງນັ້ນ, ພຣະຜູ້ເປັນ
ເຈົ້າຈຶ່ງໄດ້ນຳເອົາສ່ວນໜຶ່ງທີ່ເຫລືອຢູ່ຂອງ
ລູກຫລານຂອງໂຢເຊັບອອກມາຈາກແຜ່ນ
ດິນເຢຣູຊາເລັມ, ເພື່ອພຣະອົງຈະໄດ້ເມດ
ຕາລູກຫລານຂອງໂຢເຊັບ ເພື່ອພວກເຂົາ
ຈະບໍ່ [ຂ]ຕາຍດັ່ງທີ່ພຣະອົງໄດ້ເມດຕາບິດາ
ຂອງໂຢເຊັບ ເພື່ອເພິ່ນຈະບໍ່ຕາຍ.
8 ດັ່ງນັ້ນ, ເຊື້ອສາຍທີ່ເຫລືອຢູ່ຂອງ
ໂຢເຊັບຈະຖືກສະຖາປະນາຂຶ້ນໃນ [ກ]ແຜ່ນ
ດິນນີ້; ແລະ ມັນຈະເປັນແຜ່ນດິນມູນມໍ
ລະດົກຂອງພວກເຂົາ; ແລະ ພວກເຂົາ
ຈະສ້າງນະຄອນສັກສິດຖວາຍແດ່ພຣະ
ຜູ້ເປັນເຈົ້າຄືກັນກັບເມືອງເຢຣູຊາເລັມໃນ
ສະໄໝກ່ອນ; ແລະ ພວກເຂົາຈະບໍ່ສັບສົນ
ອີກ [ຂ]ຕໍ່ໄປ, ຈົນກວ່າທີ່ສຸດຈະມາເຖິງເມື່ອ
ແຜ່ນດິນໂລກຈະສິ້ນໄປ.
9 ແລະ ມັນຈະເປັນສະຫວັນ [ກ]ໃໝ່ ແລະ
ແຜ່ນດິນໂລກໃໝ່; ແລະ ມັນຈະເປັນຄືຂອງ
ເກົ່າ ແຕ່ວ່າຂອງເກົ່າໄດ້ສູນສິ້ນໄປແລ້ວ,
ແລະ ທຸກສິ່ງທຸກຢ່າງຈະເປັນຂອງໃໝ່ໝົດ.
10 ແລະ ຈາກນັ້ນ ເຢຣູຊາເລັມໃໝ່ຈະ
ມາ; ແລະ ຜູ້ທີ່ອາໄສຢູ່ໃນນັ້ນຍ່ອມເປັນສຸກ,
ເພາະເຄື່ອງນຸ່ງຫົ່ມຂອງພວກເຂົາ [ກ]ຂາວ
ສະອາດແລ້ວໂດຍທາງໂລຫິດຂອງພຣະ
ເມສານ້ອຍ; ແລະ ເຂົາຄືພວກທີ່ຖືກນັບ
ເຂົ້າຢູ່ໃນບັນດາລູກຫລານທີ່ເຫລືອຢູ່ຂອງ
ໂຢເຊັບ, ຜູ້ເປັນເຊື້ອສາຍອິດສະຣາເອນ.
11 ແລະ ຈາກນັ້ນ ເຢຣູຊາເລັມເກົ່າຈະ
ມາອີກ; ແລະ ຜູ້ອາໄສຢູ່ໃນນັ້ນຍ່ອມເປັນ
ສຸກ, ເພາະວ່າເຂົາໄດ້ຮັບການຊຳລະລ້າງ
ໃຫ້ຂາວສະອາດແລ້ວດ້ວຍໂລຫິດຂອງ
ພຣະເມສານ້ອຍ; ແລະ ເຂົາຄືພວກທີ່ໄດ້
ກະຈັດກະຈາຍກັນໄປ ແລະ ຖືກ [ກ]ເຕົ້າໂຮມ
ເຂົ້າມາຈາກສີ່ສ່ວນຂອງແຜ່ນດິນໂລກ,
ແລະ ຈາກແຜ່ນດິນທາງ [ຂ]ເໜືອ ແລະ ເປັນ
ຜູ້ມີສ່ວນໃນການເຮັດໃຫ້ພັນທະສັນຍາຊຶ່ງ
ພຣະເຈົ້າໄດ້ເຮັດໄວ້ກັບ [ຄ]ອັບຣາຮາມ, ບັນ
ພະບຸລຸດຂອງເຂົາສຳເລັດ.
12 ແລະ ເວລາທີ່ສິ່ງເຫລົ່ານີ້ມາເຖິງ, ມັນ
ຍ່ອມເຮັດໃຫ້ຂໍ້ຄວາມພຣະຄຳພີບັງເກີດ
ຂຶ້ນມາ, ຊຶ່ງກ່າວໄວ້ວ່າ, ຜູ້ເປັນ [ກ]ຕົ້ນຈະ
ເປັນປາຍ, ແລະ ຜູ້ເປັນປາຍຈະເປັນຕົ້ນ.
13 ແລະ ຂ້າພະເຈົ້າກຳລັງຈະຂຽນຕື່ມ

5 *ຄ* ພນມ 21:10;
3 ນຟ 20:29–36.
6 *ກ* ຄພ 42:9; 45:66–67;
84:2–5;
ຫຼຊ 1:10.
*ຂ* ຄມພ ໂຢເຊັບ, ລູກ
ຊາຍຂອງຢາໂຄບ.
*ຄ* ແອວ 46:24.
ຄມພ ສັນຍາລັກ.
7 *ກ* ປຖກ 46:2–7; 47:6.
*ຂ* 2 ນຟ 3:5.
8 *ກ* ຄມພ ແຜ່ນດິນ
ແຫ່ງຄຳສັນຍາ.
*ຂ* ມຣນ 10:31.
9 *ກ* 2 ປຕ 3:10–13;
ພນມ 21:1;
3 ນຟ 26:3;
ຄພ 101:23–25.
10 *ກ* ພນມ 7:14;
1 ນຟ 12:10–11;
ແອວ 5:27.
11 *ກ* ຄມພ ອິດສະຣາເອນ—
ການເຕົ້າໂຮມຊາວ
ອິດສະຣາເອນ.
*ຂ* ຄພ 133:26–35.
*ຄ* ຄມພ ພັນທະສັນຍາ
ຂອງອັບຣາຮາມ.
12 *ກ* ມຣກ 10:31;
1 ນຟ 13:42;
ຢຄ 5:63; ຄພ 90:9.

ອີກ ແຕ່ວ່າຖືກຫ້າມໄວ້; ຄຳທຳນາຍຂອງ
ອີເທີ ນັ້ນ ຍິ່ງໃຫຍ່ ແລະ ໜ້າອັດ ສະ ຈັນ
ແທ້ໆ; ແຕ່ພວກເຂົາກໍຖືວ່າ ມັນບໍ່ມີຄຸນຄ່າ
ຫຍັງໝົດ, ແລະ ພວກເຂົາໄດ້ຂັບໄລ່ເພິ່ນ
ອອກໄປ ແລະ ເພິ່ນໄດ້ໄປລີ້ຊ່ອນຕົວຢູ່ໃນ
ຖ້ຳໃນຕອນກາງເວັນ, ແລະ ໃນຕອນກາງ
ຄືນ ເພິ່ນໄດ້ອອກໄປເບິ່ງສິ່ງຕ່າງໆທີ່ເກີດ
ຂຶ້ນກັບຜູ້ຄົນ.
14 ແລະ ໃນເວລາທີ່ເພິ່ນລີ້ຢູ່ໃນຖ້ຳນັ້ນ,
ເພິ່ນໄດ້ເຮັດບັນທຶກທີ່ເຫລືອຢູ່ນີ້, ໂດຍເຫັນ
ຄວາມພິນາດທີ່ເກີດກັບຜູ້ຄົນໃນຕອນກາງ
ຄືນ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີດຽວກັນກັບປີທີ່ເພິ່ນຖືກຂັບໄລ່ອອກຈາກ
ບັນດາຜູ້ຄົນ ມັນເລີ່ມມີສົງຄາມໃຫຍ່ໃນ
ບັນດາຜູ້ຄົນ, ເພາະວ່າມີຫລາຍຄົນຊຶ່ງເປັນ
ພວກຍິ່ງໃຫຍ່ລຸກຂຶ້ນ, ແລະ ພະຍາຍາມທຳ
ລາຍໂຄຣິອານທະເມີໂດຍໃຊ້ແຜນລັບທີ່
ຊົ່ວຮ້າຍ ຊຶ່ງໄດ້ກ່າວມາແລ້ວ.
16 ແລະ ບັດນີ້ໂຄຣິອານທະເມີ, ໂດຍທີ່
ຕົນເອງໄດ້ຮຽນຮູ້ວິທີການຂອງສົງຄາມທັງ
ໝົດ, ແລະ ເລ່ຫລ່ຽມທັງໝົດຂອງໂລກ, ດັ່ງ
ນັ້ນລາວຈຶ່ງໄດ້ສູ້ຮົບກັບພວກທີ່ພະຍາຍາມ
ທຳລາຍລາວ.
17 ແຕ່ວ່າລາວບໍ່ໄດ້ກັບໃຈເລີຍ, ທັງບໍ່ມີ
ລູກຊາຍ ຫລື ລູກສາວທີ່ຈົບງາມຂອງລາວ
ຄົນໃດກັບໃຈເລີຍ; ທັງບໍ່ມີລູກຊາຍ ຫລື
ລູກສາວທີ່ຈົບງາມຂອງໂຄຣິຮໍຄົນໃດກັບ
ໃຈເລີຍ; ແລະ ໂດຍສະຫລຸບ, ບໍ່ມີລູກຊາຍ
ຫລື ລູກສາວທີ່ຈົບງາມຂອງຄົນໃດທັງຜືນ
ແຜ່ນດິນໂລກກັບໃຈຈາກບາບຂອງຕົນ
ເລີຍ.
18 ດັ່ງນັ້ນ, ເຫດການໄດ້ບັງເກີດຂຶ້ນຄື
ໃນປີທຳອິດທີ່ອີເທີອາໄສຢູ່ໃນຖ້ຳນັ້ນ ມີ
ຜູ້ຄົນຢ່າງຫລວງຫລາຍຖືກຂ້າຕາຍໂດຍ
ດາບຂອງ [ກ]ການມົ້ວສຸມລັບເຫລົ່ານັ້ນ ໃນ
ການຕໍ່ສູ້ກັບໂຄຣິອານທະເມີເພື່ອພວກເຂົາ
ຈະໄດ້ຍຶດເອົາອານາຈັກໄປ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກລູກຊາຍຂອງໂຄຣິອານທະເມີໄດ້ຕໍ່ສູ້
ຢ່າງດຸເດືອດ ແລະ ໄດ້ເສຍເລືອດເນື້ອໄປ
ຢ່າງຫລວງຫລາຍ.
20 ແລະ ໃນປີທີສອງພຣະຄຳຂອງພຣະ
ຜູ້ເປັນເຈົ້າໄດ້ມາຫາອີເທີ, ແລະ ສັ່ງໃຫ້
ເພິ່ນໄປທຳນາຍແກ່ [ກ]ໂຄຣິອານທະເມີວ່າ,
ຖ້າຫາກລາວ ແລະ ຄົນໃນຄອບຄົວຂອງ
ລາວທັງໝົດກັບໃຈ, ພຣະຜູ້ເປັນເຈົ້າຈະ
ມອບອານາຈັກໃຫ້ແກ່ລາວ ແລະ ຈະໄວ້ຊີ
ວິດຜູ້ຄົນ—
21 ຖ້າບໍ່ດັ່ງນັ້ນພວກເຂົາຈະຖືກທຳລາຍ
ພ້ອມກັບຄົນໃນຄອບຄົວຂອງລາວ ຍົກ
ເວັ້ນແຕ່ຕົວລາວເອງ. ແລະ ລາວຈະມີຊີວິດ
ຢູ່ເພື່ອຈະໄດ້ເຫັນຄຳທຳນາຍສຳເລັດ ຊຶ່ງມີ
ເວົ້າໄວ້ກ່ຽວກັບຜູ້ຄົນອີກ [ກ]ພວກໜຶ່ງທີ່ຈະ
ໄດ້ຮັບແຜ່ນດິນມາເປັນມູນມໍລະດົກຂອງ
ພວກເຂົາ; ແລະ ພວກເຂົາຈະເປັນຜູ້ຝັງສົບ
ຂອງໂຄຣິອານທະເມີ; ແລະ ທຸກຄົນຈະຖືກ
ທຳລາຍໄປຍົກເວັ້ນແຕ່ [ຂ]ໂຄຣິອານທະເມີ
ຄົນດຽວເທົ່ານັ້ນ.
22 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄ
ຣິອານທະເມີບໍ່ໄດ້ກັບໃຈເລີຍ, ທັງຄົນໃນ
ຄອບຄົວຂອງລາວ ແລະ ທັງຜູ້ຄົນກໍບໍ່ໄດ້
ກັບໃຈ; ແລະ ສົງຄາມກໍບໍ່ໄດ້ຢຸດຕິລົງ,
ແລະ ພວກເຂົາພະຍາຍາມທີ່ຈະຂ້າອີເທີ,
ແຕ່ວ່າເພິ່ນໄດ້ໜີໄປກ່ອນພວກເຂົາ ແລະ
ໄດ້ລີ້ຊ່ອນຕົວຢູ່ໃນຖ້ຳອີກ.
23 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊ
ເຣັດໄດ້ຍົກທັບມາ, ແລະ ລາວໄດ້ເຂົ້າມາສູ້

18 *ກ* ອທ 8:9–26.
20 *ກ* ອທ 12:1–2.
21 *ກ* ອມນ 1:19–21; ອທ 11:21.
*ຂ* ອທ 15:29–32.

ຮົບກັບໂຄຣິອານທະເມີອີກ; ແລະ ລາວໄດ້
ຮັບໄຊຊະນະ, ເຖິງຂະໜາດທີ່ໃນປີທີສາມ
ລາວໄດ້ເອົາໂຄຣິອານທະເມີມາເປັນຊະ
ເລີຍ.
24 ແລະ ໃນປີທີສີ່ ລູກຊາຍຂອງໂຄຣິ
ອານທະເມີໄດ້ເອົາຊະນະເຊເຣັດ, ແລະ
ໄດ້ຍຶດເອົາອານາຈັກຄືນມາໃຫ້ບິດາຂອງ
ຕົນອີກ.
25 ບັດນີ້ມັນໄດ້ມີສົງຄາມເກີດຂຶ້ນທົ່ວ
ຜືນແຜ່ນດິນ, ທຸກຄົນພ້ອມດ້ວຍພັກຂອງ
ຕົນກໍໄດ້ຕໍ່ສູ້ເພື່ອສິ່ງທີ່ຕົນປາດຖະໜາ.
26 ແລະ ໂດຍສະຫລຸບ, ມັນມີພວກໂຈນ
ແລະ ມີຄວາມຊົ່ວຮ້າຍນາໆປະການຢູ່ທົ່ວ
ຜືນແຜ່ນດິນ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິ
ອານທະເມີໄດ້ຄຽດແຄ້ນໃຫ້ເຊເຣັດຫລາຍ
ທີ່ສຸດ, ແລະ ລາວໄດ້ຍົກທັບໄປພ້ອມດ້ວຍ
ກອງທັບຂອງລາວ ເພື່ອໄປສູ້ຮົບ; ແລະ ທັງ
ສອງໄດ້ປະທະກັນດ້ວຍຄວາມຄຽດແຄ້ນ
ອັນຮ້າຍແຮງ; ແລະ ທັງສອງໄດ້ປະທະກັນ
ໃນຮ່ອມພູກິນການ; ແລະ ການສູ້ຮົບນັ້ນ
ກັບມາຮ້າຍແຮງທີ່ສຸດ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊ
ເຣັດໄດ້ຕໍ່ສູ້ເປັນເວລາສາມມື້. ແລະ ເຫດ
ການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້
ເອົາຊະນະລາວ, ແລະ ໄດ້ຕິດຕາມລາວໄປ
ຈົນວ່າໄປຮອດທົ່ງພຽງເຮຊະລອນ.
29 ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊ
ເຣັດໄດ້ສູ້ຮົບກັບລາວອີກໃນທົ່ງພຽງນັ້ນ;
ແລະ ຈົ່ງເບິ່ງ, ລາວໄດ້ເອົາຊະນະໂຄຣິ
ອານທະເມີ, ແລະ ໄດ້ຂັບໄລ່ລາວໃຫ້ຄືນ
ໄປຫາຮ່ອມພູກິນການອີກ.
30 ແລະ ໂຄຣິອານທະເມີໄດ້ສູ້ຮົບກັບ
ເຊເຣັດອີກໃນຮ່ອມພູກິນການ, ຊຶ່ງລາວໄດ້
ຮັບໄຊຊະນະ ແລະ ລາວໄດ້ຂ້າເຊເຣັດ.
31 ແລະ ເຊເຣັດໄດ້ເຮັດໃຫ້ໂຄຣິອານ
ທະເມີໄດ້ຮັບບາດເຈັບທີ່ກົກຂາ, ຈົນວ່າ
ລາວບໍ່ໄດ້ອອກໄປສູ້ຮົບອີກເປັນເວລາສອງ
ປີ, ຊຶ່ງໃນໄລຍະເວລານັ້ນຜູ້ຄົນທັງໝົດໃນ
ຜືນແຜ່ນດິນກໍາລັງຂ້າຟັນກັນຢູ່, ແລະ ບໍ່ມີ
ຜູ້ໃດຫ້າມປາມພວກເຂົາເລີຍ.

## ບົດທີ 14

*ຄວາມຊົ່ວຮ້າຍຂອງຜູ້ຄົນນໍາຄວາມສາບ
ແຊ່ງມາສູ່ແຜ່ນດິນ—ໂຄຣິອານທະເມີເຂົ້າ
ຮ່ວມເຮັດສົງຄາມຕໍ່ຕ້ານກີເລອາດ, ແລ້ວຕໍ່
ຕ້ານລິບ, ແລະ ຫລັງຈາກນັ້ນຕໍ່ຕ້ານຊິດ—
ເລືອດ ແລະ ການຂ້າຟັນກັນມີຢູ່ທົ່ວແຜ່ນ
ດິນ.*

1 ແລະ ບັດນີ້ມັນເລີ່ມມີຄໍາ [a]ສາບແຊ່ງ
ອັນໃຫຍ່ຫລວງທົ່ວແຜ່ນດິນ ເພາະຄວາມ
ຊົ່ວຮ້າຍຂອງຜູ້ຄົນ, ຊຶ່ງໃນຄໍາສາບແຊ່ງ
ນັ້ນ, ຖ້າຫາກຜູ້ໃດຈະວາງອາວຸດ ຫລື ດາບ
ໄວ້ເທິງຮ້ານ ຫລື ເກັບມ້ຽນໄວ້ບ່ອນທີ່ຕົນ
ເຄີຍເອົາໄວ້, ຈົ່ງເບິ່ງ, ໃນມື້ຕໍ່ມາ, ພວກເຂົາ
ຈະຫາມັນບໍ່ພົບ, ເພາະວ່າຄໍາສາບແຊ່ງທົ່ວ
ແຜ່ນດິນນັ້ນໃຫຍ່ຫລວງທີ່ສຸດ.
2 ດັ່ງນັ້ນ ທຸກໆຄົນຈຶ່ງເກັບກໍາສິ່ງທີ່ຕົນ
ເປັນເຈົ້າຂອງໄວ້ໃກ້ມື, ແລະ ຈະບໍ່ຢືມຂອງ
ຜູ້ໃດ, ທັງບໍ່ເອົາໃຫ້ຜູ້ໃດຢືມ; ທຸກໆຄົນໄດ້
ຈັບດ້າມດາບຂອງຕົນໄວ້ໃນມືຂວາ, ເພື່ອ
ປ້ອງກັນຊັບສົມບັດຂອງຕົນ, ແລະ ຊີວິດ
ຂອງຕົນ ພ້ອມທັງເມຍຂອງຕົນ ແລະ ລູກ
ຂອງຕົນ.
3 ແລະ ບັດນີ້, ຫລັງຈາກສອງປີຜ່ານໄປ,
ແລະ ຫລັງຈາກການຕາຍຂອງເຊເຣັດ, ຈົ່ງ
ເບິ່ງ, ນ້ອງຊາຍຂອງເຊເຣັດໄດ້ຍົກທັບມາ

**14** 1 *a* ຮລມ 12:18; 13:17–23; ມມ 1:17–18; 2:10–14.

ແລະ ລາວໄດ້ສູ້ຮົບກັບ ໂຄຣິອານທະເມີ,
ຊຶ່ງເປັນເຫດໃຫ້ໂຄຣິອານທະເມີໄດ້ຮັບໄຊ
ຊະນະ ແລະ ໄດ້ໄລ່ຕິດຕາມລາວໄປໃນຖິ່ນ
ແຫ້ງແລ້ງກັນດານເອຄິດ.
4 ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງ
ຊາຍຂອງເຊເຣັດໄດ້ສູ້ຮົບກັບລາວຢູ່ໃນຖິ່ນ
ແຫ້ງແລ້ງກັນດານເອຄິດ, ແລະ ການສູ້ຮົບ
ນັ້ນຮ້າຍແຮງທີ່ສຸດ, ແລະ ຄົນເປັນຈຳນວນ
ຫລາຍພັນຄົນໄດ້ລົ້ມຕາຍໄປດ້ວຍດາບ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິ
ອານທະເມີໄດ້ປິດລ້ອມຖິ່ນແຫ້ງແລ້ງກັນ
ດານໄວ້; ແລະ ນ້ອງຊາຍຂອງເຊເຣັດໄດ້
ຍົກທັບອອກຈາກຖິ່ນແຫ້ງແລ້ງກັນດານໃນ
ເວລາກາງຄືນ, ແລະ ໄດ້ຂ້າຄົນໃນກອງທັບ
ຂອງໂຄຣິອານທະເມີສ່ວນໜຶ່ງ, ໃນຂະນະ
ທີ່ພວກເຂົາເມົາເຫລົ້າຢູ່.
6 ແລະ ລາວໄດ້ຍົກທັບມາຮອດແຜ່ນດິນ
ໂມຣັນ, ແລະ ໄດ້ຂຶ້ນນັ່ງບັນລັງແທນໂຄຣິ
ອານທະເມີ.
7 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄ
ຣິອານທະເມີໄດ້ອາໄສຢູ່ນຳກອງທັບຂອງ
ລາວໃນຖິ່ນແຫ້ງແລ້ງກັນດານເປັນເວລາ
ສອງປີ, ຊຶ່ງເປັນເຫດໃຫ້ລາວໄດ້ຮັບກຳລັງ
ມາໃຫ້ກອງທັບຂອງລາວຫລາຍຂຶ້ນ.
8 ບັດນີ້ນ້ອງຊາຍຂອງເຊເຣັດ, ຊຶ່ງມີຊື່ວ່າ
ກີເລອາດ, ກໍໄດ້ຮັບກຳລັງມາໃຫ້ກອງທັບ
ຂອງລາວຫລາຍຂຶ້ນ, ຍ້ອນວ່າການມົ້ວສຸມ
ລັບ.
9 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ມະຫາປະໂລຫິດຂອງລາວເອງໄດ້ລອບຂ້າ
ລາວໃນຂະນະທີ່ລາວກຳລັງນັ່ງຢູ່ໃນບັນ
ລັງ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນ
ຜູ້ໜຶ່ງຂອງພວກມົ້ວສຸມລັບໄດ້ລອບຂ້າຄົນ
ນັ້ນໃນທາງລັບ; ແລະ ໄດ້ຍຶດເອົາອານາຈັກ
ມາເປັນຂອງຕົນ; ແລະ ລາວມີຊື່ວ່າ ລິບ;
ແລະ ລິບເປັນຄົນຮ່າງໃຫຍ່ກວ່າຄົນອື່ນໃນ
ບັນດາຜູ້ຄົນທັງໝົດ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ປີທຳອິດຂອງລິບ, ໂຄຣິອານທະເມີໄດ້ຍົກ
ທັບມາຫາແຜ່ນດິນໂມຣັນ ແລະ ໄດ້ສູ້ຮົບ
ກັບລິບ.
12 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ລາວໄດ້ສູ້ຮົບກັບລິບ, ຊຶ່ງໃນການສູ້ຮົບນັ້ນ
ລິບໄດ້ຟັນແຂນຂອງລາວ ຈົນລາວໄດ້ຮັບ
ບາດເຈັບ; ເຖິງຢ່າງໃດກໍຕາມ, ກອງທັບ
ຂອງໂຄຣິອານທະເມີຍັງໄດ້ມຸ້ງໜ້າເຂົ້າຫາ
ລິບອີກ, ຈົນວ່າລາວໄດ້ປົບໜີໄປເຖິງຊາຍ
ແດນແຄມຝັ່ງທະເລ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄ
ຣິອານທະເມີໄດ້ໄລ່ຕາມລາວໄປ; ແລະ
ລິບກໍໄດ້ຕໍ່ສູ້ກັບລາວໃນແຄມຝັ່ງທະເລນັ້ນ.
14 ແລະ ເຫດການໄດ້ບັງເກີດຂຶ້ນຄື ລິບ
ໄດ້ຟາດຟັນກອງທັບຂອງໂຄຣິອານທະເມີ,
ຈົນວ່າພວກເຂົາໄດ້ໜີໄປຫາຖິ່ນແຫ້ງແລ້ງ
ກັນດານເອຄິດອີກ.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື ລິບ
ໄດ້ໄລ່ຕາມໂຄຣິອານທະເມີໄປອີກຈົນ
ຮອດທົ່ງພຽງອາກົດ. ແລະ ໂຄຣິອານທະເມີ
ໄດ້ເອົາທຸກຄົນໄປນຳລາວ ຂະນະທີ່ລາວ
ກຳລັງປົບໜີໄປທາງໜ້າລິບ ໄປຍັງແຜ່ນ
ດິນສ່ວນນັ້ນບ່ອນທີ່ລາວໜີໄປ.
16 ແລະ ເວລາລາວໄດ້ມາຮອດທົ່ງພຽງ
ອາກົດແລ້ວ, ລາວກໍໄດ້ສູ້ຮົບກັບລິບ, ແລະ
ລາວໄດ້ຟາດຟັນລິບຈົນເຖິງແກ່ຄວາມ
ຕາຍ; ເຖິງຢ່າງໃດກໍຕາມ, ນ້ອງຊາຍຂອງ
ລິບກໍໄດ້ຍົກມາສູ້ຮົບກັບໂຄຣິອານທະເມີ
ເປັນການແກ້ແຄ້ນ, ແລະ ການສູ້ຮົບນັ້ນ
ຮ້າຍແຮງທີ່ສຸດ, ຈົນເຮັດໃຫ້ໂຄຣິອານທະ
ເມີໜີໄປທາງໜ້າກອງທັບຂອງນ້ອງຊາຍ
ຂອງລິບອີກ.
17 ບັດນີ້ນ້ອງຊາຍຂອງລິບມີຊື່ວ່າ ຊິດ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຊິດໄດ້ໄລ່ຕາມໂຄຣິອານທະເມີໄປ, ແລະ ລາວໄດ້ໂຄ່ນລົ້ມຫລາຍຫົວເມືອງ, ແລະ ລາວໄດ້ຂ້າທັງພວກແມ່ຍິງ ແລະ ເດັກນ້ອຍ, ແລະ ໄດ້ເຜົາບ້ານເມືອງຖິ້ມ.

18 ແລະ ຜູ້ຄົນຕະຫລອດທົ່ວແຜ່ນດິນມີຄວາມຢ້ານກົວຊິດ; ແທ້ຈິງແລ້ວ, ມີສຽງຮ້ອງໄປທົ່ວແຜ່ນດິນວ່າ—ຜູ້ໃດຈະສາມາດຢືນຢູ່ຕໍ່ໜ້າກອງທັບຂອງຊິດໄດ້? ຈົ່ງເບິ່ງ, ລາວໄດ້ກວາດລ້າງແຜ່ນດິນທີ່ຢູ່ຕໍ່ໜ້າລາວຈົນໝົດສິ້ນ!

19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນເລີ່ມເຕົ້າໂຮມເຂົ້າກັນເປັນກອງທັບຕະຫລອດທົ່ວຜືນແຜ່ນດິນ.

20 ແລະ ພວກເຂົາໄດ້ແບ່ງແຍກກັນອອກ; ແລະ ສ່ວນໜຶ່ງໄດ້ໜີໄປຫາກອງທັບຂອງຊິດ, ແລະ ອີກສ່ວນໜຶ່ງໄດ້ໜີໄປຫາກອງທັບຂອງໂຄຣິອານທະເມີ.

21 ແລະ ສົງຄາມນັ້ນຮ້າຍແຮງ ແລະ ຍືດເຍື້ອຍາວນານທີ່ສຸດ, ແລະ ພາບຂອງການນອງເລືອດ ແລະ ການຂ້າຟັນກັນນັ້ນມີຢູ່ຢ່າງດົນນານທີ່ສຸດ, ຈົນວ່າທັງຜືນແຜ່ນດິນເຕັມໄປດ້ວຍ [ກ]ຊາກສົບຂອງຄົນຕາຍ.

22 ແລະ ສົງຄາມໄດ້ເກີດຂຶ້ນຢ່າງວ່ອງໄວ ແລະ ຮີບດ່ວນທີ່ສຸດ ຈົນວ່າບໍ່ມີຜູ້ໃດຢຸດຝັງຊາກສົບເລີຍ, ມີແຕ່ເດີນທັບຕໍ່ໄປຈາກການຂ້າຟັນບ່ອນນີ້ໄປຫາການຂ້າຟັນບ່ອນນັ້ນ, ໂດຍປະຖິ້ມຊາກສົບໄວ້ທັງຊາຍ ແລະ ຍິງ, ແລະ ເດັກນ້ອຍ ໃຫ້ກ່າຍກອງຢູ່ຕາມຜືນແຜ່ນດິນ ເພື່ອໃຫ້ [ກ]ໂຕໜອນເຈາະກິນ.

23 ແລະ ຊາກສົບໄດ້ສົ່ງກິ່ນເໝັນໄປທົ່ວຜືນແຜ່ນດິນ ເຖິງແມ່ນຕະຫລອດທົ່ວຜືນແຜ່ນດິນ; ດັ່ງນັ້ນ ຜູ້ຄົນຈຶ່ງຖືກລົບກວນທັງກາງເວັນ ແລະ ກາງຄືນເພາະກິ່ນເໝັນນັ້ນ.

24 ເຖິງຢ່າງໃດກໍຕາມ, ຊິດຍັງບໍ່ຢຸດໃນການໄລ່ຕາມໂຄຣິອານທະເມີໄປ; ເພາະວ່າລາວສາບານວ່າ ຈະແກ້ແຄ້ນໂຄຣິອານທະເມີເອງ, ເພື່ອເລືອດຂອງອ້າຍລາວທີ່ຖືກຂ້າຕາຍ, ແລະ ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາຫາອີເທີວ່າ ໂຄຣິອານທະເມີຈະບໍ່ຖືກຂ້າ.

25 ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ພຣະຜູ້ເປັນເຈົ້າໄດ້ສະເດັດມາຢ້ຽມຢາມພວກເຂົາເຫລົ່ານັ້ນໃນຄວາມບໍລິບູນແຫ່ງພຣະພິໂລດຂອງພຣະອົງ, ແລະ ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງນັ້ນໄດ້ຕຽມທາງໄວ້ໃຫ້ຄວາມພິນາດອັນເປັນນິດຂອງພວກເຂົາ.

26 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊິດໄດ້ໄລ່ຕາມໂຄຣິອານທະເມີໄປທາງຕາເວັນອອກ ຈົນມາຮອດຊາຍແດນແຄມຝັ່ງທະເລ, ແລະ ບ່ອນນັ້ນລາວໄດ້ສູ້ຮົບກັບຊິດເປັນເວລາສາມມື້.

27 ແລະ ຄວາມພິນາດໃນບັນດາກອງທັບຂອງຊິດເປັນໜ້າຢ້ານກົວທີ່ສຸດ ຈົນວ່າພວກທະຫານຂອງຊິດເລີ່ມ ຢ້ານຕົກໃຈ, ແລະ ເລີ່ມປົບໜີໄປທາງໜ້າຂອງກອງທັບຂອງໂຄຣິອານທະເມີ; ແລະ ພວກເຂົາໄດ້ແຕກໜີໄປຫາແຜ່ນດິນໂຄຣິຮໍ, ແລະ ໄດ້ກວາດລ້າງຜູ້ອາໄສຢູ່ທັງໝົດທີ່ບໍ່ຍອມເຂົ້າຮ່ວມກັບພວກເຂົາໄປຕໍ່ໜ້າພວກເຂົາ.

28 ແລະ ພວກເຂົາໄດ້ຕັ້ງຜ້າເຕັ້ນຂຶ້ນໃນຮ່ອມພູໂຄຣິຮໍ; ແລະ ໂຄຣິອານທະເມີກໍໄດ້ຕັ້ງຜ້າເຕັ້ນຂອງລາວຂຶ້ນໃນຮ່ອມພູເຊີ. ບັດນີ້ຮ່ອມພູເຊີນັ້ນຕັ້ງຢູ່ໃກ້ກັບເນີນພູຄອມນໍ; ດັ່ງນັ້ນ ໂຄຣິອານທະເມີຈຶ່ງໄດ້ເຕົ້າໂຮມ

21 *ກ* ອທ 11:6.

22 *ກ* ອຊຢ 14:9–11.

ກອງທັບ ຂອງ ລາວ ຢູ່ ເທິງ ເນີນ ພູ ຄອມ ນໍ, ແລະ ໄດ້ເປົ່າແກ ດັງກ້ອງ ໄປຫາກອງທັບຂອງຊິດ ເພື່ອເຊື້ອເຊີນພວກເຂົາອອກມາສູ້ຮົບ.

29 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ພວກເຂົາ ໄດ້ອອກມາ, ແຕ່ຖືກ ຂັບ ໄລ່ ຄືນ ໄປ; ແລະ ພວກ ເຂົາ ໄດ້ ຍົກ ທັບ ມາ ເປັນ ເທື່ອທີສອງ, ແລະ ພວກເຂົາໄດ້ຖືກຂັບໄລ່ ຄືນໄປອີກ. ແລະ ເຫດການໄດ້ບັງເກີດຂຶ້ນ ຄື ພວກເຂົາໄດ້ຍົກທັບມາອີກເປັນເທື່ອທີສາມ, ແລະ ການສູ້ຮົບນັ້ນຮ້າຍແຮງທີ່ສຸດ.

30 ແລະ ເຫດການໄດ້ບັງເກີດຂຶ້ນຄື ຊິດ ໄດ້ຟັນໂຄຣິອານທະເມີ ຈົນວ່າລາວມີບາດແຜເລິກຫລາຍບ່ອນ; ແລະ ໂຄຣິອານທະເມີ, ໂດຍທີ່ໄດ້ເສຍເລືອດຫລາຍຈົນວ່າໄດ້ສະຫລົບໄປ, ແລະ ຖືກຫາມໄປຖິ້ມຄືກັບວ່າລາວຕາຍແລ້ວ.

31 ບັດນີ້ການສູນເສຍທັງຜູ້ຊາຍ, ຜູ້ຍິງ ແລະ ເດັກນ້ອຍຂອງສອງຝ່າຍນັ້ນ ແມ່ນໃຫຍ່ຫລວງທີ່ສຸດ ຈົນວ່າຊິດຕ້ອງສັ່ງໃຫ້ກອງທັບຂອງລາວບໍ່ໃຫ້ໄລ່ຕາມກອງທັບຂອງໂຄຣິອານທະເມີໄປ; ດັ່ງນັ້ນ, ພວກເຂົາຈຶ່ງໄດ້ກັບຄືນໄປຫາຄ້າຍຂອງພວກເຂົາ.

## ບົດທີ 15

*ຊາວຢາເຣັດຈຳນວນຫລາຍລ້ານຄົນຖືກຂ້າຕາຍໃນສະໜາມຮົບ—ຊິດ ແລະ ໂຄຣິອານທະເມີເຕົ້າໂຮມຜູ້ຄົນທັງໝົດເພື່ອສູ້ຮົບໃນສົງຄາມແຫ່ງມະຕະ—ພຣະວິນຍານຂອງພຣະຜູ້ເປັນເຈົ້າລົ້ມເລີກຄວາມພະຍາຍາມກັບພວກເຂົາ—ປະຊາຊາດຢາເຣັດຖືກທຳລາຍຈົນໝົດສິ້ນ—ໂຄຣິອານທະເມີຄົນດຽວເທົ່ານັ້ນທີ່ຍັງເຫລືອຢູ່.*

1 ແລະ ເຫດການໄດ້ບັງເກີດຂຶ້ນ ເມື່ອບາດແຜຂອງໂຄຣິອານທະເມີຫາຍດີແລ້ວ, ລາວເລີ່ມຈື່ຈຳ [ກ]ຄຳເວົ້າທີ່ອີເທີໄດ້ເວົ້າກັບລາວ.

2 ລາວ ເຫັນ ວ່າ ຜູ້ ຄົນ ຂອງ ລາວ ເກືອບສອງລ້ານຄົນຖືກຂ້າຕາຍດ້ວຍດາບ, ແລະ ລາວ ເລີ່ມ ມີຄວາມ ເສົ້າສະຫລົດໃຈ; ແທ້ຈິງແລ້ວ, ມີຊາຍຊະກັນທີ່ຖືກຂ້າຕາຍສອງລ້ານຄົນພ້ອມທັງເມຍຂອງພວກເຂົາ ແລະ ລູກຂອງພວກເຂົາ.

3 ລາວຈຶ່ງເລີ່ມກັບໃຈຈາກຄວາມຊົ່ວຊຶ່ງລາວໄດ້ເຮັດໄປນັ້ນ; ລາວເລີ່ມນຶກເຖິງຄຳເວົ້າທີ່ອອກມາຈາກປາກຂອງສາດສະດາທັງຫລາຍ, ແລະ ລາວເຫັນວ່າມັນສຳເລັດແລ້ວຕາມນັ້ນທຸກຂໍ້ຈົນຮອດບັດນີ້; ແລະ ຈິດວິນຍານຂອງລາວໂສກເສົ້າຫລາຍ ແລະ ບໍ່ຍອມທີ່ຈະສະບາຍໃຈເລີຍ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ຂຽນສານຫາຊິດ, ເພື່ອສະແດງຄວາມປາດຖະໜາໃຫ້ຊິດຍົກເວັ້ນຜູ້ຄົນ, ແລະ ລາວຈະມອບອານາຈັກໃຫ້ເພື່ອເຫັນແກ່ຊີວິດຂອງຜູ້ຄົນ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຊິດໄດ້ຮັບສານຂອງລາວແລ້ວ, ລາວຈຶ່ງໄດ້ຂຽນສານຕອບໂຄຣິອານທະເມີ, ວ່າຖ້າຫາກໂຄຣິອານທະເມີຍອມມອບຕົວເພື່ອຊິດຈະໄດ້ຂ້າລາວດ້ວຍດາບຂອງຕົນແລ້ວ, ລາວຈະໄວ້ຊີວິດຂອງຜູ້ຄົນ.

6 ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນບໍ່ໄດ້ກັບໃຈຈາກຄວາມຊົ່ວຮ້າຍຂອງພວກເຂົາເລີຍ; ແລະ ຜູ້ຄົນຂອງໂຄຣິອານທະເມີຖືກຍຸຍົງໃຫ້ຄຽດແຄ້ນໃຫ້ຜູ້ຄົນຂອງຊິດ; ແລະ ຜູ້ຄົນຂອງຊິດໄດ້ຖືກຍຸຍົງໃຫ້ຄຽດແຄ້ນໃຫ້ຜູ້ຄົນຂອງໂຄຣິອານທະເມີ;

**15** 1 *ກ* ອທ 13:20–21.

ດັ່ງນັ້ນ, ຜູ້ຄົນຂອງຊີດຈຶ່ງໄດ້ສູ້ຮົບກັບຜູ້ຄົນ
ຂອງໂຄຣິອານທະເມີ.
7 ແລະ ເວລາໂຄຣິອານທະເມີເຫັນວ່າ
ຕົນເອງກຳລັງຈະເສຍໄຊ ລາວຈຶ່ງໄດ້ໜີໄປ
ຕໍ່ໜ້າຜູ້ຄົນຂອງຊີດອີກ.
8 ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວ
ໄດ້ມາຮອດນ້ຳຣິບລິອານຄຳ, ຊຶ່ງແປວ່າ
ກວ້າງໃຫຍ່ໄພສານ ຫລື ໃຫຍ່ກວ່ານ້ຳທັງ
ໝົດ; ດັ່ງນັ້ນ, ເວລາພວກເຂົາມາຮອດແມ່
ນ້ຳນີ້ແລ້ວ ພວກເຂົາໄດ້ຕັ້ງຜ້າເຕັ້ນຂຶ້ນ;
ແລະ ຊີດກໍໄດ້ຕັ້ງຜ້າເຕັ້ນຂຶ້ນໃກ້ກັນນັ້ນ;
ແລະ ສະນັ້ນ ໃນມື້ຕໍ່ມາພວກເຂົາໄດ້ອອກ
ມາສູ້ຮົບກັນອີກ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາໄດ້ສູ້ຮົບກັນຢ່າງດຸເດືອດທີ່ສຸດ, ຊຶ່ງ
ເຮັດໃຫ້ໂຄຣິອານທະເມີໄດ້ຮັບບາດເຈັບ
ອີກ, ແລະ ລາວໄດ້ສະຫລົບໄປເພາະການ
ເສຍເລືອດຢ່າງໜັກ.
10 ແລະ ເຫດການໄດ້ບັງເກີດຂຶ້ນຄື
ກອງທັບຂອງໂຄຣິອານທະເມີໄດ້ມຸ້ງໜ້າ
ເຂົ້າຫາກອງທັບຂອງຊີດຈົນວ່າໄດ້ຮັບໄຊ
ຊະນະຈາກສັດຕູ, ຈົນເຮັດໃຫ້ພວກເຂົາ
ຕ້ອງປົບໜີຕໍ່ໜ້າພວກເຂົາ; ແລະ ພວກ
ເຂົາໄດ້ໜີໄປທາງໃຕ້, ແລະ ຕັ້ງຜ້າເຕັ້ນ
ຂອງພວກເຂົາຂຶ້ນໃນບ່ອນທີ່ເອີ້ນວ່າ ໂອ
ແກດ.
11 ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງ
ທັບຂອງໂຄຣິອານທະເມີໄດ້ຕັ້ງຜ້າເຕັ້ນ
ຂອງພວກເຂົາຂຶ້ນໃກ້ກັບ ເນີນພູຣາມາ;
ແລະ ມັນເປັນເນີນພູແຫ່ງດຽວກັນກັບບ່ອນ
ທີ່ບິດາຂອງຂ້າພະເຈົ້າມໍມອນໄດ້ [ກ]ເຊື່ອງ
ບັນທຶກສັກສິດໄວ້ກັບພຣະຜູ້ເປັນເຈົ້າ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ເຕົ້າໂຮມຜູ້ຄົນທັງໝົດໃນທົ່ວ
ຜືນແຜ່ນດິນ, ຜູ້ທີ່ບໍ່ໄດ້ຖືກຂ້າ, ນອກຈາກ
ອີເທີເທົ່ານັ້ນ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື ອີເທີ
ໄດ້ເຫັນການປະພຶດທັງໝົດຂອງຜູ້ຄົນ;
ແລະ ເພິ່ນເຫັນວ່າຜູ້ຄົນທີ່ສະໜັບສະໜູນ
ໂຄຣິອານທະເມີໄດ້ເຂົ້າຮ່ວມກັບກອງທັບ
ຂອງໂຄຣິອານທະເມີ; ແລະ ຜູ້ຄົນທີ່ສະ
ໜັບສະໜູນຊີດກໍໄດ້ເຂົ້າຮ່ວມກັບກອງທັບ
ຂອງຊີດ.
14 ດັ່ງນັ້ນ, ພວກເຂົາຈຶ່ງໄດ້ໃຊ້ເວລາປະ
ມານສີ່ປີເພື່ອເຕົ້າໂຮມຜູ້ຄົນທັງໝົດທີ່ຢູ່ໃນ
ຜືນແຜ່ນດິນ, ແລະ ເພື່ອຕົນຈະໄດ້ຮັບກຳ
ລັງໃຫ້ຫລາຍເທົ່າທີ່ຈະຫລາຍໄດ້.
15 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເວລາຜູ້ຄົນມາເຕົ້າໂຮມກຳລັງກັນໝົດທຸກ
ຄົນແລ້ວ, ທຸກຄົນຈຶ່ງໄປກັບກອງທັບທີ່ຕົນ
ຕ້ອງການພ້ອມດ້ວຍເມຍຂອງຕົນ ແລະ
ລູກຂອງຕົນ—ທັງຜູ້ຊາຍ, ຜູ້ຍິງ, ແລະ ເດັກ
ນ້ອຍ ກໍໄດ້ຖືອາວຸດແຫ່ງສົງຄາມ, ໂດຍມີ
ໂລ່, ແລະ [ກ]ແຜ່ນປົກເອິກ, ແລະ ເຄື່ອງປ້ອງ
ກັນຫົວ, ແລະ ນຸ່ງຫົ່ມຕາມວິທີການຂອງ
ສົງຄາມ—ພວກເຂົາໄດ້ເດີນທັບເຂົ້າຫາ
ກັນເພື່ອສູ້ຮົບ, ແລະ ພວກເຂົາໄດ້ຕໍ່ສູ້ກັນ
ຕະຫລອດມື້ນັ້ນແຕ່ບໍ່ມີຝ່າຍໃດຊະນະ.
16 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ເຖິງຕອນກາງຄືນມາ ພວກເຂົາກໍອິດເມື່ອຍ
ແລະ ໄດ້ກັບຄືນໄປຄ້າຍຂອງໃຜລາວ;
ແລະ ຫລັງຈາກກັບຄືນໄປເຖິງຄ້າຍແລ້ວ
ພວກເຂົາກໍເລີ່ມຄ່ຳຄວນ ຍ້ອນວ່າການສູນ
ເສຍຜູ້ຄົນທີ່ຖືກຂ້າຕາຍ; ແລະ ສຽງຮ້ອງ
ຂອງພວກເຂົາ ແລະ ການຄ່ຳຄວນຂອງ
ພວກເຂົານັ້ນດັງແຮງທີ່ສຸດ, ຈົນເຮັດໃຫ້ມີ
ສຽງດັງກ້ອງສະໜັ່ນທີ່ສຸດໃນອາກາດ.
17 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ

11 *ກ* ມມ 6:6.
15 *ກ* ມຊຢ 8:7–10.

ມື້ຕໍ່ມາ ພວກເຂົາໄດ້ອອກໄປສູ້ຮົບກັນອີກ,
ແລະ ການສູ້ຮົບໃນມື້ນັ້ນຍິ່ງໃຫຍ່ ແລະ
ເປັນໜ້າຢ້ານກົວທີ່ສຸດ; ເຖິງຢ່າງໃດກໍຕາມ,
ກໍບໍ່ມີຝ່າຍໃດຈະເອົາຊະນະໄດ້, ແລະ ເມື່ອ
ເຖິງຕອນກາງຄືນມາ ພວກເຂົາໄດ້ເຮັດໃຫ້
ອາກາດດັງກ້ອງສະໜັ່ນໄປດ້ວຍສຽງຮ້ອງ
ໄຫ້ ແລະ ສຽງຄວນຄາງ, ດ້ວຍສຽງຈົ່ມວ່າ
ຂອງພວກເຂົາ ຍ້ອນວ່າການສູນເສຍຜູ້ຄົນ
ຂອງພວກເຂົາທີ່ຖືກຂ້າຕາຍ.
18 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄ
ຣິອານທະເມີໄດ້ຂຽນສານໄປຫາຊິດອີກ,
ໂດຍປາດຖະໜາບໍ່ໃຫ້ລາວມາສູ້ຮົບອີກ,
ແຕ່ໃຫ້ລາວເອົາອານາຈັກໄປ ແລະ ໃຫ້ໄວ້
ຊີວິດຂອງຜູ້ຄົນ.
19 ແຕ່ຈົ່ງເບິ່ງ, ພຣະວິນຍານຂອງພຣະ
ຜູ້ເປັນເຈົ້າໄດ້ເລີກລົ້ມຄວາມພະຍາຍາມ
ກັບພວກເຂົາແລ້ວ, ແລະ *ກ*ຊາຕານມີ
ອຳນາດເຕັມທີ່ເໜືອໃຈຂອງຜູ້ຄົນ; ເພາະ
ພວກເຂົາຍອມຕົນໃຫ້ກັບຄວາມແຂງກະ
ດ້າງຂອງໃຈຂອງພວກເຂົາ, ແລະ ມີຄວາມ
ມືດດັບໃນຈິດໃຈຂອງພວກເຂົາ ເພື່ອພວກ
ເຂົາຈະຖືກທຳລາຍ; ດັ່ງນັ້ນ ພວກເຂົາຈຶ່ງ
ໄດ້ອອກໄປສູ້ຮົບກັນອີກ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ຕໍ່ສູ້ກັນຕະຫລອດມື້ນັ້ນ, ແລະ
ເມື່ອເຖິງຕອນກາງຄືນມາ ພວກເຂົາກໍນອນ
ຢູ່ກັບດາບຂອງພວກເຂົາ.
21 ແລະ ໃນມື້ຕໍ່ມາ ພວກເຂົາກໍໄດ້ຕໍ່ສູ້
ກັນຈົນຮອດຕອນກາງຄືນ.
22 ແລະ ເມື່ອເຖິງຕອນກາງຄືນ, ພວກ
ເຂົາກໍ *ກ*ມຶນເມົາດ້ວຍຄວາມຄຽດແຄ້ນ, ຄື
ກັນກັບຄົນເມົາເຫລົ້າອະງຸ່ນ; ແລະ ພວກ
ເຂົາກໍໄດ້ນອນຢູ່ກັບດາບຂອງພວກເຂົາອີກ.
23 ແລະ ໃນມື້ຕໍ່ມາ ພວກເຂົາກໍໄດ້ຕໍ່ສູ້
ກັນອີກ; ແລະ ເມື່ອເຖິງຕອນກາງຄືນ ພວກ
ເຂົາກໍລົ້ມຕາຍກັນໝົດ ຍົກເວັ້ນແຕ່ຜູ້ຄົນ
ຂອງໂຄຣິອານທະເມີຫ້າສິບສອງຄົນ, ແລະ
ຜູ້ຄົນຂອງຊິດຫົກສິບເກົ້າຄົນເທົ່ານັ້ນ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ນອນຢູ່ກັບດາບຂອງພວກເຂົາ
ໃນຄືນນັ້ນ, ແລະ ໃນມື້ຕໍ່ມາ ພວກເຂົາກໍໄດ້
ຕໍ່ສູ້ກັນອີກ, ແລະ ພວກເຂົາໄດ້ຕໍ່ສູ້ກັນດ້ວຍ
ກຳລັງຂອງພວກເຂົາ ແລະ ດ້ວຍດາບຂອງ
ພວກເຂົາ ແລະ ດ້ວຍເຄື່ອງປ້ອງກັນອາວຸດ
ຂອງພວກເຂົາຕະຫລອດມື້ນັ້ນ.
25 ແລະ ເມື່ອຮອດຕອນກາງຄືນ ຜູ້ຄົນ
ຂອງຊິດເຫລືອຢູ່ສາມສິບສອງຄົນ, ແລະ ຜູ້
ຄົນຂອງໂຄຣິອານທະເມີເຫລືອຢູ່ຊາວເຈັດ
ຄົນ.
26 ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເຂົາເຫລົ່ານັ້ນໄດ້ພາກັນກິນດື່ມ ແລະ ໄດ້
ເຂົ້ານອນ, ແລະ ໄດ້ຕຽມຕົວເພື່ອຄວາມຕາຍ
ໃນມື້ຕໍ່ມາ. ແລະ ພວກເຂົາເປັນຄົນຮ່າງໃຫຍ່
ສູງ ແລະ ມີກຳລັງຕາມກຳລັງຂອງມະນຸດ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກເຂົາໄດ້ຕໍ່ສູ້ກັນເປັນເວລາສາມຊົ່ວ
ໂມງ, ແລະ ພວກເຂົາໄດ້ສະຫລົບໄປດ້ວຍ
ການເສຍເລືອດຢ່າງໜັກ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາ
ຜູ້ຄົນຂອງໂຄຣິອານທະເມີໄດ້ຮັບກຳລັງພໍທີ່
ຈະຍ່າງໄປໄດ້ແລ້ວ, ພວກເຂົາກໍຕຽມທ່າທີ່
ຈະໜີໄປເພື່ອເອົາຕົວລອດ; ແຕ່ຈົ່ງເບິ່ງ, ຊິດ
ໄດ້ລຸກຂຶ້ນພ້ອມດ້ວຍຜູ້ຄົນຂອງລາວ, ແລະ
ລາວໄດ້ສາບານດ້ວຍຄວາມຄຽດແຄ້ນວ່າ
ລາວຈະຂ້າໂຄຣິອານທະເມີໃຫ້ໄດ້ ຖ້າບໍ່ດັ່ງ
ນັ້ນ ລາວກໍຈະຕາຍດ້ວຍດາບ.
29 ດັ່ງນັ້ນ, ລາວຈຶ່ງໄດ້ໄລ່ຕາມພວກ
ເຂົາໄປ, ແລະ ໃນມື້ຕໍ່ມາຊິດກໍຕາມມາທັນ;

19 *ກ* ຄມພ ມານ.
22 *ກ* ມຣນ 9:23.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກ
ເຂົາທຸກ ຄົນ ໄດ້ ລົ້ມຕາຍ ດ້ວຍດາບ [ກ]ໝົດ
ແລ້ວ, ນອກຈາກ ໂຄຣິອານທະເມີກັບຊີດ
ເທົ່ານັ້ນ, ຈົ່ງເບິ່ງ ຊີດໄດ້ສະຫລົບໄປເພາະ
ການເສຍເລືອດຢ່າງໜັກ.
30 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄ
ຣິອານທະເມີໄດ້ເນີ້ງຕົວເອື່ອຍດາບ, ແລະ
ພັກຜ່ອນຢູ່ໜ້ອຍໜຶ່ງ, ແລ້ວລາວໄດ້ຕັດຫົວ
ຊີດຈົນຂາດ.
31 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຫລັງ ຈາກ ລາວ ໄດ້ ຕັດ ຫົວ ຂອງ ຊີດ ຂາດ
ແລ້ວ, ຊີດ ໄດ້ ເອົາມືຊູ ຕົວ ເອງ ໃຫ້ລຸກຂຶ້ນ
ແລະ ກໍລົ້ມລົງອີກ; ແລະ ຫລັງຈາກທີ່ລາວ
ຊັກເພື່ອຫາຍໃຈ, ລາວກໍໄດ້ຂາດໃຈຕາຍ.
32 ແລະ ເຫດການໄດ້ບັງເກີດຂຶ້ນຄື [ກ]ໂຄ
ຣິອານທະເມີໄດ້ລົ້ມລົງຢູ່ກັບພື້ນດິນ, ຄືກັນ
ກັບຄົນທີ່ຕາຍແລ້ວ.
33 ແລະ ພຣະຜູ້ເປັນເຈົ້າໄດ້ຮັບສັ່ງກັບ
ອີເທີ, ແລະ ກ່າວກັບເພິ່ນວ່າ: ຈົ່ງອອກໄປ.
ແລະ ອີເທີໄດ້ອອກໄປ, ແລະ ເຫັນວ່າພຣະ
ຄໍາຂອງພຣະຜູ້ເປັນເຈົ້າສໍາເລັດແລ້ວທັງ
ໝົດ; ແລະ ເພິ່ນໄດ້ຈົບ [ກ]ບັນທຶກຂອງເພິ່ນ;
(ແລະ ຂ້າພະເຈົ້າບໍ່ໄດ້ຂຽນໄວ້ແມ່ນແຕ່ໜຶ່ງ
ສ່ວນຮ້ອຍ) ແລະ ເພິ່ນໄດ້ເຊື່ອງມັນໄວ້ດ້ວຍ
ວິທີທີ່ຜູ້ຄົນຂອງລິມໄຮໄດ້ພົບເຫັນມັນ.
34 ບັດນີ້ຄໍາສຸດທ້າຍຊຶ່ງ [ກ]ອີເທີໄດ້ຂຽນ
ໄວ້ມີດັ່ງນີ້: ບໍ່ວ່າພຣະຜູ້ເປັນເຈົ້າຈະມີພຣະ
ປະສົງໃຫ້ຂ້າພະເຈົ້າປ່ຽນແປງສະພາບ, ຫລື
ໃຫ້ຂ້າພະເຈົ້າຍອມຕາມພຣະປະສົງຂອງ
ພຣະຜູ້ເປັນເຈົ້າໃນເນື້ອໜັງນັ້ນ, ມັນບໍ່ສໍາ
ຄັນຖ້າຫາກເປັນໄປວ່າຂ້າພະເຈົ້າຈະລອດ
ໃນອານາຈັກຂອງພຣະເຈົ້າ. ອາແມນ.

# ໜັງສືໂມໂຣໄນ

## ບົດທີ 1

*ໂມໂຣໄນຂຽນເພື່ອຜົນປະໂຫຍດຂອງຊາວ ເລມັນ—ຊາວນີໄຟຜູ້ທີ່ບໍ່ປະຕິເສດພຣະ ຄຣິດຖືກຂ້າຕາຍ. ປະມານ ຄ.ສ. 401–421.*

1 ບັດນີ້ຂ້າພະເຈົ້າ [ກ]ໂມໂຣໄນ ຫລັງຈາກ
ຫຍໍ້ເລື່ອງລາວຂອງຜູ້ຄົນຢາເຣັດຈົບແລ້ວ,
ຂ້າພະເຈົ້າບໍ່ຄິດວ່າຈະໄດ້ຂຽນອີກ, ແຕ່ວ່າ
ຂ້າພະເຈົ້າຍັງບໍ່ຕາຍເທື່ອ; ແລະ ຂ້າພະ
ເຈົ້າບໍ່ໄດ້ໃຫ້ຊາວເລມັນເຫັນຂ້າພະເຈົ້າ
ເພາະພວກເຂົາຈະທໍາລາຍຂ້າພະເຈົ້າ.
2 ເພາະ ຈົ່ງເບິ່ງ, [ກ]ສົງຄາມລະຫວ່າງ
ພວກ ເຂົາ ເອງກໍ ໂຫດ ຮ້າຍ ທີ່ ສຸດ; ແລະ
ເປັນຍ້ອນຄວາມຄຽດແຄ້ນຂອງພວກເຂົາ,
ພວກເຂົາຈຶ່ງໄດ້ [ຂ]ຂ້າຊາວນີໄຟທຸກຄົນທີ່ບໍ່
ປະຕິເສດພຣະຄຣິດ.
3 ແລະ ຂ້າພະເຈົ້າໂມໂຣໄນຈະບໍ່ [ກ]ປະຕິ
ເສດພຣະຄຣິດ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຊັດ
ເຊພະເນຈອນໄປຫາບ່ອນໃດກໍຕາມທີ່ຂ້າ
ພະເຈົ້າຈະໄປໄດ້ ເພື່ອຄວາມປອດໄພຂອງ

29 *ກ* ອທ 13:20–21.
32 *ກ* ອມນ 1:20–22.
33 *ກ* ມຊຢ 8:9; ແອວ 37:21–31; ອທ 1:1–5.
34 *ກ* ອທ 12:2.

[ໂມໂຣໄນ]
**1** 1 *ກ* ຄນພ ໂມໂຣໄນ, ລູກຊາຍຂອງມໍມອນ.
2 *ກ* 1 ນຟ 12:20–23.
*ຂ* ແອວ 45:14.
3 *ກ* ມທ 10:32–33; 3 ນຟ 29:5.

ຊີວິດຂອງຂ້າພະເຈົ້າເອງ.
4 ດັ່ງ ນັ້ນ, ຂ້າພະເຈົ້າຈຶ່ງຂຽນອີກເລັກ
ໜ້ອຍ, ກົງກັນຂ້າມກັບຂ້າພະເຈົ້າຄິດໄວ້;
ເພາະວ່າຂ້າພະເຈົ້າບໍ່ຄິດວ່າ ຈະໄດ້ຂຽນ
ຕື່ມອີກ; ແຕ່ຂ້າພະເຈົ້າກໍຂຽນຕື່ມອີກເລັກ
ໜ້ອຍ, ເພື່ອບາງທີມັນອາດຈະມີຄຸນຄ່າແກ່
ຊາວເລມັນ, ພີ່ນ້ອງຂອງຂ້າພະເຈົ້າ, ໃນມື້
ໜຶ່ງຂ້າງໜ້າຕາມພຣະປະສົງຂອງພຣະຜູ້
ເປັນເຈົ້າ.

## ບົດທີ 2

*ພຣະເຢຊູໄດ້ມອບອຳນາດໃຫ້ອັກຄະສາວົກຊາວນີໄຟສິບສອງຄົນ ເພື່ອຈະໄດ້ມອບຂອງປະທານແຫ່ງພຣະວິນຍານບໍລິສຸດ. ປະມານ ຄ.ສ. 401–421.*

1 ພຣະຄຳຂອງພຣະຄຣິດ ຊຶ່ງພຣະອົງໄດ້
ກ່າວກັບ [ກ]ສານຸສິດສິບສອງຄົນຂອງພຣະ
ອົງ ຜູ້ຊຶ່ງພຣະອົງໄດ້ເລືອກໄວ້ໃນຂະນະທີ່
ພຣະອົງວາງພຣະຫັດໃສ່ພວກເພິ່ນ—
2 ແລະ ພຣະອົງໄດ້ເອີ້ນຊື່ຂອງພວກເພິ່ນ,
ໂດຍກ່າວວ່າ: ເຈົ້າຈົ່ງເອີ້ນຫາພຣະບິດາໃນ
ນາມຂອງເຮົາ, ໃນຄຳອະທິຖານຢ່າງມີພະ
ລັງ; ແລະ ຫລັງຈາກເຈົ້າເຮັດສິ່ງນີ້ແລ້ວ, ເຈົ້າ
ຈະມີ [ກ]ອຳນາດເພື່ອວ່າຄົນທີ່ເຈົ້າຈະປົກ [ຂ]ມື
ໃສ່ເຂົາ, ເຈົ້າຈະມອບພຣະວິນຍານບໍລິສຸດ
ໃຫ້; ແລະ [ຄ]ເຈົ້າຈົ່ງມອບໃຫ້ໃນນາມຂອງ
ເຮົາ, ເພາະອັກຄະສາວົກຂອງເຮົາເຮັດດັ່ງນີ້.
3 ບັດນີ້ພຣະຄຣິດໄດ້ກ່າວຂໍ້ຄວາມນີ້
ກັບພວກເພິ່ນໃນເວລາທີ່ພຣະອົງສະເດັດ
ມາປະກົດຕົວຕໍ່ພວກເພິ່ນເປັນຄັ້ງທຳອິດ;
ແລະ ຝູງຊົນບໍ່ໄດ້ຍິນ, ແຕ່ວ່າສານຸສິດທຸກ
ຄົນໄດ້ຍິນ; ແລະ ຄົນທັງຫລາຍທີ່ພວກ
ເພິ່ນໄດ້ [ກ]ປົກມືໃສ່, ພຣະວິນຍານບໍລິສຸດກໍ
ໄດ້ສະເດັດລົງມາຫາຄົນເຫລົ່ານັ້ນ.

## ບົດທີ 3

*ຜູ້ເປັນແອວເດີແຕ່ງຕັ້ງປະໂລຫິດ ແລະ ຄູສອນໂດຍການວາງມື. ປະມານ ຄ.ສ. 401–421.*

1 ວິທີທີ່ສານຸສິດຜູ້ຊຶ່ງຖືກເອີ້ນວ່າ [ກ]ແອວເດີ
ຂອງສາດສະໜາຈັກ, ໄດ້ [ຂ]ແຕ່ງຕັ້ງປະໂລ
ຫິດ ແລະ ຄູສອນ—
2 ຫລັງຈາກທີ່ພວກເພິ່ນໄດ້ອະທິຖານ
ຫາພຣະບິດາໃນພຣະນາມຂອງພຣະຄຣິດ
ແລ້ວ, ພວກເພິ່ນໄດ້ປົກມືໃສ່ພວກເຂົາ,
ແລະ ກ່າວວ່າ:
3 ໃນພຣະນາມຂອງພຣະເຢຊູຄຣິດ ຂ້າ
ພະເຈົ້າແຕ່ງຕັ້ງທ່ານໃຫ້ເປັນປະໂລຫິດ
(ຫລື ຖ້າຫາກເຂົາຈະເປັນຄູສອນ, ຂ້າພະ
ເຈົ້າແຕ່ງຕັ້ງທ່ານໃຫ້ເປັນຄູສອນ) ເພື່ອ
ສັ່ງສອນການກັບໃຈ ແລະ [ກ]ການປົດບາບ
ໂດຍທາງພຣະເຢຊູຄຣິດ, ໂດຍຄວາມອົດ
ທົນແຫ່ງສັດທາຕໍ່ພຣະນາມຂອງພຣະອົງ
ຈົນເຖິງທີ່ສຸດ. ອາແມນ.
4 ແລະ ຕາມວິທີນີ້ພວກເພິ່ນໄດ້ [ກ]ແຕ່ງ
ຕັ້ງປະໂລຫິດ ແລະ ຄູສອນ, ຕາມ [ຂ]ຂອງ
ປະທານ ແລະ ການເອີ້ນຂອງພຣະເຈົ້າ
ໃຫ້ແກ່ມະນຸດ; ແລະ ພວກເພິ່ນໄດ້ແຕ່ງ
ຕັ້ງພວກເຂົາໂດຍ [ຄ]ອຳນາດຂອງພຣະວິນ
ຍານບໍລິສຸດ, ຊຶ່ງຢູ່ໃນພວກເພິ່ນ.

**2** 1 *ກ* 3 ນຟ 13:25.
2 *ກ* ຄມພ ອຳນາດ.
*ຂ* ຄມພ ມື, ການວາງ.
*ຄ* 3 ນຟ 18:37.
3 *ກ* ກຈກ 19:6.
**3** 1 *ກ* ແອວ 6:1.
ຄມພ ແອວເດີ.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
3 *ກ* ຄມພ ປົດບາບ, ການປົດບາບ.
4 *ກ* ຄພ 18:32; 20:60.
*ຂ* ຄມພ ຂອງປະທານ.
*ຄ* 1 ນຟ 13:37; ມຣນ 6:9.

## ບົດທີ 4

*ວິທີແອວເດີ ແລະ ປະໂລຫິດປະຕິບັດສິນລະລຶກໃຫ້ພອນແກ່ເຂົ້າຈີ່ມີອະທິບາຍໄວ້. ປະມານ ຄ.ສ. 401–421.*

1 ນີ້ຄື [ກ]ວິທີຂອງ [ຂ]ແອວເດີ ແລະ ປະໂລ
ຫິດປະຕິບັດເນື້ອໜັງ ແລະ ໂລຫິດຂອງ
ພຣະຄຣິດໃຫ້ຄົນໃນສາດສະໜາຈັກ; ແລະ
ພວກເພິ່ນໄດ້ [ຄ]ປະຕິບັດຕາມພຣະບັນຍັດ
ຂອງພຣະຄຣິດ; ດັ່ງນັ້ນ ເຮົາຈຶ່ງຮູ້ວ່າ ມັນ
ເປັນວິທີທີ່ຖືກຕ້ອງ; ແລະ ແອວເດີ ຫລື ປະ
ໂລຫິດໄດ້ປະຕິບັດມັນ—
2 ແລະ ພວກເພິ່ນໄດ້ຄຸເຂົ່າລົງພ້ອມກັບ
ຄົນໃນສາດສະໜາຈັກ, ແລະ ໄດ້ອະທິ
ຖານຫາພຣະບິດາໃນພຣະນາມຂອງພຣະ
ຄຣິດ, ມີຄວາມວ່າ:
3 ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະຖິດ
ນິລັນດອນ, ພວກຂ້າພຣະອົງທູນຂໍພຣະ
ອົງໃນພຣະນາມຂອງພຣະບຸດຂອງພຣະ
ອົງ; ພຣະເຢຊູຄຣິດ, ໂປດປະທານພອນ
ແລະ ເຮັດໃຫ້ [ກ]ເຂົ້າຈີ່ນີ້ສັກສິດແກ່ຈິດວິນ
ຍານຂອງເຂົາທັງຫລາຍຜູ້ທີ່ຮັບສ່ວນ ເພື່ອ
ເຂົາຈະໄດ້ຮັບປະທານດ້ວຍ [ຂ]ຄວາມລະ
ນຶກເຖິງພຣະກາຍຂອງພຣະບຸດຂອງພຣະ
ອົງ, ແລະ ເປັນສັກຂີພະຍານຕໍ່ພຣະອົງ,
ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະຖິດນິ
ລັນດອນ, ວ່າເຂົາເຕັມໃຈຮັບ [ຄ]ພຣະນາມ
ຂອງພຣະບຸດຂອງພຣະອົງ, ແລະ ລະນຶກ
ເຖິງພຣະອົງຕະຫລອດເວລາ ແລະ ຮັກສາ
ພຣະບັນຍັດຂອງພຣະອົງ ຊຶ່ງປະທານໃຫ້
ເຂົາ, ເພື່ອເຂົາຈະມີ [ງ]ພຣະວິນຍານຂອງ
ພຣະອົງຢູ່ດ້ວຍຕະຫລອດເວລາ. ອາແມນ.

## ບົດທີ 5

*ລະບຽບການປະຕິບັດສິນລະລຶກໃຫ້ພອນແກ່ເຫລົ້າອະງຸ່ນໄດ້ຖືກຕັ້ງໄວ້. ປະມານ ຄ.ສ. 401–421.*

1 ນີ້ຄື [ກ]ວິທີໃຫ້ພອນແກ່ເຫລົ້າອະງຸ່ນ—
ຈົ່ງເບິ່ງ, ພວກເຂົາໄດ້ເອົາຈອກມາ, ແລະ
ກ່າວວ່າ:
2 ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະຖິດ
ນິລັນດອນ, ພວກຂ້າພຣະອົງທູນຂໍພຣະ
ອົງໃນພຣະນາມຂອງພຣະບຸດຂອງພຣະ
ອົງ, ພຣະເຢຊູຄຣິດ, ໂປດປະທານພອນ
ແລະ ເຮັດໃຫ້ [ກ]ເຫລົ້າອະງຸ່ນນີ້ສັກສິດແກ່
ຈິດວິນຍານຂອງເຂົາທັງຫລາຍຜູ້ທີ່ດື່ມ,
ເພື່ອເຂົາຈະເຮັດດ້ວຍ [ຂ]ຄວາມລະນຶກເຖິງ
ໂລຫິດຂອງພຣະບຸດຂອງພຣະອົງ ຊຶ່ງຫລັ່ງ
ເພື່ອເຂົາ; ເພື່ອເຂົາຈະເປັນສັກຂີພະຍານຕໍ່
ພຣະອົງ, ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະ
ຖິດນິລັນດອນ, ວ່າເຂົາລະນຶກເຖິງພຣະອົງ
ຕະຫລອດເວລາ, ເພື່ອເຂົາຈະມີພຣະວິນ
ຍານຂອງພຣະອົງຢູ່ດ້ວຍ. ອາແມນ.

## ບົດທີ 6

*ຄົນທີ່ກັບໃຈໄດ້ຮັບບັບຕິສະມາ ແລະ ໄດ້ຮັບການຜູກມິດ—ສະມາຊິກຂອງສາດສະໜາຈັກຜູ້ທີ່ກັບໃຈໄດ້ຮັບການອະໄພ—*

**4** 1 *ກ* 3 ນຟ 18:1–7.
*ຂ* ຄມພ ແອວເດີ.
*ຄ* ຄພ 20:76–77.
3 *ກ* ຄມພ ສິນລະລຶກ.
*ຂ* ລກ 22:19;
1 ກຣທ 11:23–24;
3 ນຟ 18:7.
*ຄ* ຄມພ ພຣະເຢຊູຄຣິດ—
ການຮັບເອົາພຣະ
ນາມຂອງພຣະເຢຊູ
ຄຣິດໄວ້ກັບເຮົາ.
*ງ* ຄມພ ພຣະວິນ
ຍານບໍລິສຸດ.
**5** 1 *ກ* 3 ນຟ 18:8–11;
ຄພ 20:78–79.
2 *ກ* ຄພ 27:2–4.
ຄມພ ສິນລະລຶກ.
*ຂ* ລກ 22:19–20;
1 ກຣທ 11:25.

*ການປະຊຸມຖືກດຳເນີນ ໂດຍອຳນາດຂອງ ພຣະວິນຍານບໍລິສຸດ. ປະມານ ຄ.ສ. 401–421.*

1 ແລະ ບັດນີ້ຂ້າພະເຈົ້າຂໍເວົ້າກ່ຽວກັບ
ການໃຫ້ [ກ]ບັບຕິສະມາ. ຈົ່ງເບິ່ງ ແອວເດີ,
ປະໂລຫິດ, ແລະ ຄູສອນ ໄດ້ຮັບບັບຕິ
ສະມາ; ແລະ ພວກເພິ່ນຈະບໍ່ໄດ້ຮັບບັບຕິ
ສະມານອກຈາກວ່າພວກເພິ່ນຈະນຳຜົນ
ອອກມາວ່າພວກເພິ່ນມີ [ຂ]ຄ່າຄວນ.
2 ທັງພວກເພິ່ນຈະບໍ່ຮັບຜູ້ໃດມາສູ່ການ
ຮັບບັບຕິສະມານອກຈາກຄົນເຫລົ່ານັ້ນຈະ
ອອກມາດ້ວຍໃຈທີ່ [ກ]ຊອກຊ້ຳ ແລະ ວິນ
ຍານທີ່ສຳນຶກຜິດ, ແລະ ເປັນພະຍານຕໍ່
ສາດສະໜາຈັກວ່າ ພວກເຂົາໄດ້ກັບໃຈ
ແທ້ໆຈາກບາບທັງໝົດຂອງພວກເຂົາ.
3 ແລະ ຈະບໍ່ຮັບຜູ້ໃດມາສູ່ບັບຕິສະມາ
ນອກຈາກເຂົາຈະ [ກ]ຮັບພຣະນາມຂອງ
ພຣະຄຣິດເສຍກ່ອນ, ໂດຍມີຄວາມຕັ້ງໃຈ
ທີ່ຈະຮັບໃຊ້ພຣະອົງຈົນເຖິງທີ່ສຸດ.
4 ແລະ ຫລັງຈາກທີ່ເຂົາໄດ້ຮັບບັບຕິ
ສະມາແລ້ວ, ແລະ ອຳນາດຂອງພຣະວິນ
ຍານບໍລິສຸດໄດ້ກະທຳ ແລະ [ກ]ຊຳລະລ້າງ
ເຂົາໃຫ້ສະອາດແລ້ວ, ເຂົາຈຶ່ງໄດ້ຖືກນັບ
ເຂົ້າຢູ່ໃນບັນດາຜູ້ຄົນຂອງສາດສະໜາຈັກ
ຂອງພຣະຄຣິດ; ແລະ [ຂ]ຊື່ຂອງເຂົາໄດ້ຖືກ
ຮັບໄວ້, ເພື່ອເຂົາຈະໄດ້ຖືກຈົດຈຳ ແລະ
ບຳລຸງລ້ຽງດ້ວຍພຣະຄຳອັນປະເສີດຂອງ
ພຣະເຈົ້າ, ເພື່ອຮັກສາເຂົາຢູ່ໃນທາງທີ່ຖືກ
ຕ້ອງ, ເພື່ອໃຫ້ເຂົາ [ຄ]ເອົາໃຈໃສ່ຕໍ່ການອະ
ທິຖານຕະຫລອດເວລາ, ໂດຍ [ງ]ເພິ່ງອາໄສ
ແຕ່ໃນພຣະຄຸນຄວາມດີຂອງພຣະຄຣິດ
ຢ່າງດຽວ, ອົງຜູ້ເປັນ [ຈ]ຜູ້ສ້າງ ແລະ ເປັນຜູ້
ເຮັດໃຫ້ສັດທາຂອງເຂົາສົມບູນ.
5 ແລະ ຄົນໃນ [ກ]ສາດສະໜາຈັກໄດ້ຊຸມ
ນຸມກັນຢູ່ [ຂ]ເລື້ອຍໆ, ເພື່ອ [ຄ]ຖືສິນອົດເຂົ້າ
ແລະ ເພື່ອອະທິຖານ ແລະ ເພື່ອສົນທະນາ
ກັນກ່ຽວກັບຄວາມຜາສຸກຂອງຈິດວິນຍານ
ຂອງພວກເຂົາ.
6 ແລະ ພວກເຂົາໄດ້ມາຊຸມນຸມກັນຢູ່
ເລື້ອຍໆເພື່ອຮັບສ່ວນເຂົ້າຈີ່ ແລະ ເຫລົ້າ
ອະງຸ່ນ, ດ້ວຍຄວາມລະນຶກເຖິງອົງພຣະ
ເຢຊູເຈົ້າ.
7 ແລະ ພວກເຂົາເຄັ່ງຄັດທີ່ຈະເອົາໃຈ
ໃສ່ [ກ]ບໍ່ໃຫ້ມີຄວາມຊົ່ວຮ້າຍໃນບັນດາ
ພວກເຂົາ; ແລະ ຜູ້ໃດຖືກພົບວ່າໄດ້ກະທຳ
ຄວາມຊົ່ວຮ້າຍ, ແລະ ມີພະຍານຂອງສາດ
ສະໜາຈັກ [ຂ]ສາມຄົນກ່າວໂທດຜູ້ນັ້ນຕໍ່ໜ້າ
[ຄ]ແອວເດີ, ແລະ ຖ້າຫາກເຂົາບໍ່ກັບໃຈ,
ແລະ ບໍ່ [ງ]ສາລະພາບຜິດແລ້ວ, ຊື່ຂອງເຂົາ
ຍ່ອມຖືກ [ຈ]ລຶບອອກ, ແລະ ເຂົາຈະບໍ່ຖືກ
ນັບເຂົ້າຢູ່ກັບບັນດາຜູ້ຄົນຂອງພຣະຄຣິດ.

---

**6** 1 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* ຄມພ ຄ່າຄວນ, ການມີຄ່າຄວນ.
2 *ກ* ຄມພ ຫົວໃຈທີ່ຊອກຊ້ຳ.
3 *ກ* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
4 *ກ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຂ* ຄພ 20:82.
*ຄ* ແອວ 34:39; 3 ນຟ 18:15–18.
*ງ* 2 ນຟ 31:19; ຄພ 3:20.
*ຈ* ຮຣ 12:2.
5 *ກ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
*ຂ* 3 ນຟ 18:22; 4 ນຟ 1:12; ຄພ 88:76.
*ຄ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
7 *ກ* ຄພ 20:54.
*ຂ* ຄພ 42:80–81. ຄມພ ພະຍານ.
*ຄ* ແອວ 6:1. ຄມພ ແອວເດີ.
*ງ* ຄມພ ສາລະພາບ, ການສາລະພາບ.
*ຈ* ອພຍ 32:33; ຄພ 20:83. ຄມພ ການຖືກໄລ່ອອກ.

8 ແຕ່ *ກ*ວ່າທຸກເທື່ອທີ່ເຂົາກັບໃຈ ແລະ
ສະແຫວງຫາການໃຫ້ອະໄພດ້ວຍເຈດຕະ
ນາອັນແທ້ຈິງ, ເຂົາກໍຈະໄດ້ຮັບ *ຂ*ການໃຫ້
ອະໄພ.

9 ແລະ ສາດສະໜາຈັກ *ກ*ດຳເນີນການ
ປະຊຸມຂອງພວກເຂົາຕາມວິທີການທຳງານ
ຂອງພຣະວິນຍານ ແລະ ໂດຍອຳນາດຂອງ
*ຂ*ພຣະວິນຍານບໍລິສຸດ; ເພາະດັ່ງທີ່ອຳນາດ
ຂອງພຣະວິນຍານບໍລິສຸດໄດ້ນຳພາພວກ
ເຂົາໃຫ້ເຮັດຢ່າງໃດ ບໍ່ວ່າໃຫ້ສັ່ງສອນ, ຫລື
ແນະນຳ, ຫລື ອະທິຖານ, ຫລື ໄຫວ້ວອນ,
ຫລື ຮ້ອງເພງ, ມັນກໍເປັນໄປຢ່າງນັ້ນ.

## ບົດທີ 7

*ການເຊື້ອເຊີນໃຫ້ເຂົ້າໄປໃນທີ່ພັກຂອງພຣະຜູ້ເປັນເຈົ້າ—ອະທິຖານດ້ວຍເຈດຕະນາອັນແທ້ຈິງ—ພຣະວິນຍານຂອງພຣະຄຣິດຊ່ວຍໃຫ້ມະນຸດຮູ້ຈັກຄວາມດີຈາກຄວາມຊົ່ວ—ຊາຕານຊັກຈູງມະນຸດໃຫ້ປະຕິເສດພຣະຄຣິດ ແລະ ເຮັດຄວາມຊົ່ວ—ສາດສະດາໄດ້ສະແດງໃຫ້ປະຈັກເຖິງການສະເດັດມາຂອງພຣະຄຣິດ—ໂດຍຜ່ານສັດທາ, ສິ່ງມະຫັດສະຈັນຈຶ່ງເກີດຂຶ້ນ ແລະ ເຫລົ່າທູດປະຕິບັດສາດສະໜາກິດ—ມະນຸດຄວນມີຄວາມຫວັງໃນຊີວິດນິລັນດອນ ແລະ ຍຶດໝັ້ນໃນຄວາມໃຈບຸນ. ປະມານ ຄ.ສ. 401–421.*

1 ແລະ ບັດນີ້ຂ້າພະເຈົ້າໂມໂຣໄນຂຽນ
ຄຳຂອງ ມໍມອນ ບິດາ ຂອງຂ້າພະເຈົ້າ
ໄວ້ເລັກໜ້ອຍ, ຊຶ່ງເພິ່ນໄດ້ເວົ້າກ່ຽວກັບ
*ກ*ສັດທາ, ຄວາມຫວັງ, ແລະ ຄວາມໃຈ
ບຸນ; ເພາະເພິ່ນໄດ້ເວົ້າກັບຜູ້ຄົນຕາມວິທີນີ້
ເມື່ອເພິ່ນສິດສອນພວກເຂົາໃນທຳມະສາ
ລາ ຊຶ່ງພວກເຂົາໄດ້ສ້າງໄວ້ເປັນສະຖານທີ່
ນະມັດສະການ.

2 ແລະ ບັດນີ້ຂ້າພະເຈົ້າມໍມອນຂໍເວົ້າກັບ
ທ່ານ, ພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ; ແລະ
ມັນເປັນດ້ວຍພຣະຄຸນຂອງພຣະເຈົ້າອົງ
ເປັນພຣະບິດາ, ແລະ ອົງພຣະເຢຊູຄຣິດ
ເຈົ້າຂອງພວກເຮົາ, ແລະ ພຣະປະສົງອັນ
ບໍລິສຸດຂອງພຣະອົງ, ເພາະຂອງປະທານ
ແຫ່ງ *ກ*ການເອີ້ນຂອງພຣະອົງທີ່ມີແກ່ຂ້າ
ພະເຈົ້າ, ຂ້າພະເຈົ້າຈຶ່ງໄດ້ຮັບອະນຸດຍາດ
ໃຫ້ເວົ້າກັບທ່ານໃນເທື່ອນີ້.

3 ດັ່ງນັ້ນ, ຂ້າພະເຈົ້າຈະເວົ້າກັບທ່ານຜູ້
ເປັນຂອງສາດສະໜາຈັກ, ຊຶ່ງເປັນຜູ້ຕິດ
ຕາມ ແລະ ເປັນຜູ້ທີ່ຮັກສັນຕິສຸກຂອງພຣະ
ຄຣິດ, ແລະ ຊຶ່ງມີຄວາມຫວັງຢ່າງພຽງພໍ
ຊຶ່ງດ້ວຍຄວາມຫວັງນີ້ທ່ານຈະເຂົ້າໄປໃນ
*ກ*ທີ່ພັກຂອງພຣະຜູ້ເປັນເຈົ້າໄດ້, ນັບແຕ່
ເວລານີ້ເປັນຕົ້ນໄປຈົນກວ່າທ່ານຈະໄດ້ພັກ
ຜ່ອນຢູ່ກັບພຣະອົງໃນສະຫວັນ.

4 ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ຂ້າ
ພະເຈົ້າຕັດສິນເລື່ອງເຫລົ່ານີ້ກ່ຽວກັບທ່ານ
ເພາະການ *ກ*ເດີນດ້ວຍສັນຕິສຸກຂອງທ່ານ
ກັບລູກຫລານມະນຸດ.

5 ເພາະຂ້າພະເຈົ້າຈື່ຈຳເຖິງພຣະຄຳ
ຂອງພຣະເຈົ້າໄດ້ ຊຶ່ງກ່າວໄວ້ວ່າ ໂດຍວຽກ
ງານຂອງເຂົາ ທ່ານຈະ *ກ*ຮູ້ຈັກເຂົາ; ເພາະ
ຖ້າຫາກວຽກງານຂອງເຂົາດີ, ເຂົາກໍເປັນ
ຄົນດີເໝືອນກັນ.

8 *ກ* ມຊຢ 26:30–31.
*ຂ* ຄມພ ອະໄພ, ໃຫ້ອະໄພ.
9 *ກ* ຄພ 20:45; 46:2.
*ຂ* ຄມພ ພຣະວິນຍານບໍລິສຸດ.
**7** 1 *ກ* 1 ກຣທ 13;
ອທ 12:3–22, 27–37;
ມຣນ 8:14; 10:20–23.
2 *ກ* ຄມພ ເອີ້ນ, ການ
ເອີ້ນ, ຖືກເອີ້ນຈາກ
ພຣະເຈົ້າ, ຕຳແໜ່ງ.
3 *ກ* ຄມພ ພັກຜ່ອນ.
4 *ກ* 1 ຢຮ 2:6;
ຄພ 19:23.
5 *ກ* 3 ນຟ 14:15–20.

6 ເພາະ ຈົ່ງ ເບິ່ງ, ພຣະ ເຈົ້າ ກ່າວ ວ່າ ຄົນ [ກ]ຊົ່ວຈະເຮັດສິ່ງດີບໍ່ໄດ້; ເພາະຖ້າຫາກເຂົາ ຖວາຍສິ່ງຂອງ ຫລື [ຂ]ອະທິຖານຕໍ່ພຣະເຈົ້າ ມັນກໍບໍ່ເປັນປະໂຫຍດກັບເຂົາເລີຍ ນອກ ຈາກວ່າເຂົາຈະເຮັດດ້ວຍເຈດຕະນາອັນ ແທ້ຈິງ.

7 ເພາະ ຈົ່ງ ເບິ່ງ, ຈະ ບໍ່ ນັບ ວ່າ ມັນ ເປັນ ຄວາມຊອບທຳສຳລັບເຂົາ.

8 ເພາະຈົ່ງເບິ່ງ, ຖ້າຫາກຄົນ [ກ]ຊົ່ວຈະໃຫ້ ສິ່ງຂອງ, ເຂົາຈະເຮັດໄປຢ່າງ [ຂ]ບໍ່ເຕັມໃຈ; ດັ່ງນັ້ນ ຈຶ່ງນັບວ່າເຂົາຍັງມີສິ່ງຂອງນັ້ນຢູ່; ດັ່ງນັ້ນ ຈຶ່ງນັບວ່າເຂົາຊົ່ວຕໍ່ພຣະພັກຂອງ ພຣະເຈົ້າ.

9 ແລະ ເຊັ່ນດຽວກັນ ມັນຈະຖືກນັບວ່າ ຊົ່ວຕໍ່ມະນຸດຄືກັນຖ້າຫາກເຂົາອະທິຖານ ແຕ່ບໍ່ແມ່ນ [ກ]ດ້ວຍເຈດຕະນາອັນແທ້ຈິງ ຂອງໃຈ; ແທ້ຈິງແລ້ວ, ມັນຈະບໍ່ເປັນປະ ໂຫຍດກັບເຂົາເລີຍ, ເພາະວ່າພຣະເຈົ້າຈະ ບໍ່ຮັບຄົນເຊັ່ນນັ້ນ.

10 ດັ່ງນັ້ນ, ຄົນຊົ່ວຈະເຮັດສິ່ງທີ່ດີບໍ່ໄດ້; ທັງເຂົາຈະໃຫ້ສິ່ງທີ່ດີບໍ່ໄດ້.

11 ເພາະຈົ່ງເບິ່ງ, [ກ]ອ່າງນ້ຳຂົມຈະໃຫ້ນ້ຳ ດີອອກມາບໍ່ໄດ້; ທັງອ່າງນ້ຳດີຈະໃຫ້ນ້ຳຂົມ ອອກມາບໍ່ໄດ້; ດັ່ງນັ້ນ, ຄົນທີ່ຮັບໃຊ້ມານ ຈະ [ຂ]ຕິດຕາມພຣະຄຣິດບໍ່ໄດ້; ແລະ ຖ້າ ຫາກເຂົາຕິດຕາມພຣະຄຣິດ ເຂົາຈະເປັນ ຜູ້ຮັບໃຊ້ຂອງມານບໍ່ໄດ້.

12 ດັ່ງນັ້ນ, ສິ່ງທີ່ [ກ]ດີທັງໝົດມາຈາກພຣະ ເຈົ້າ; ແລະ ສິ່ງທີ່ [ຂ]ຊົ່ວມາຈາກມານ; ເພາະ ມານເປັນສັດຕູກັບພຣະເຈົ້າ, ແລະ ຕໍ່ສູ້ກັບ ພຣະອົງຢູ່ຕະຫລອດເວລາ, ແລະ ເຊື້ອເຊີນ ແລະ ຊັກຈູງມະນຸດໃຫ້ເຮັດ [ຄ]ບາບ ແລະ ເຮັດຄວາມຊົ່ວຢູ່ຕະຫລອດເວລາ.

13 ແຕ່ ຈົ່ງ ເບິ່ງ, ສິ່ງທີ່ເປັນຂອງພຣະ ເຈົ້າເຊື້ອເຊີນ ແລະ ຊັກຈູງໃຫ້ມະນຸດເຮັດ ຄວາມດີຢູ່ຕະຫລອດເວລາ; ດັ່ງນັ້ນ, ທຸກ ສິ່ງທຸກຢ່າງທີ່ເຊື້ອເຊີນ ແລະ [ກ]ຊັກຈູງໃຫ້ ເຮັດຄວາມດີ, ແລະ ໃຫ້ຮັກພຣະເຈົ້າ ແລະ ໃຫ້ຮັບໃຊ້ພຣະອົງ, ແມ່ນມາຈາກການ [ຂ]ດົນໃຈຈາກພຣະເຈົ້າ.

14 ດັ່ງນັ້ນ, ພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ, ຈົ່ງລະວັງໃຫ້ດີ, ເພື່ອທ່ານຈະບໍ່ຕັດສິນວ່າ ສິ່ງທີ່ [ກ]ຊົ່ວມາຈາກພຣະເຈົ້າ, ຫລື ວ່າສິ່ງທີ່ ດີ ແລະ ເປັນຂອງພຣະເຈົ້າມາຈາກມານ.

15 ເພາະຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະ ເຈົ້າ, ມັນຖືກມອບໃຫ້ເພື່ອທ່ານຈະໄດ້ [ກ]ຕັດສິນ, ເພື່ອທ່ານຈະຮູ້ຈັກຄວາມດີຈາກ ຄວາມຊົ່ວ; ແລະ ວິທີທີ່ຈະຕັດສິນນັ້ນແຈ່ມ ແຈ້ງດີ, ເພື່ອທ່ານຈະຮູ້ດ້ວຍຄວາມຮູ້ອັນ ສົມບູນເໝືອນດັ່ງຄວາມສະຫວ່າງຂອງ ກາງເວັນກັບຄວາມມືດຂອງກາງຄືນ.

16 ເພາະຈົ່ງເບິ່ງ, [ກ]ພຣະວິນຍານຂອງ ພຣະຄຣິດໄດ້ຖືກມອບໃຫ້ແກ່ມະນຸດທຸກ ຄົນ, ເພື່ອເຂົາຈະ [ຂ]ຮູ້ຈັກຄວາມດີຈາກ

6 *ກ* ມທ 7:15–18.
*ຂ* ແອວ 34:28.
ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
8 *ກ* ສພສ 15:8.
*ຂ* ຄພ 64:34.
9 *ກ* ຢກບ 1:6–7; 5:16; ມຣນ 10:4.
11 *ກ* ຢກບ 3:11–12.
*ຂ* ມທ 6:24; 2 ນຟ 31:10–13; ຄພ 56:2.
12 *ກ* ຢກບ 1:17; 1 ຢຮ 4:1–2; ອທ 4:12.
*ຂ* ແອວ 5:39–42.
*ຄ* ຣລມ 6:30.
ຄມພ ບາບ.
13 *ກ* 2 ນຟ 33:4; ອທ 8:26.
*ຂ* ຄມພ ດົນໃຈ, ການດົນໃຈ.
14 *ກ* ອຊຢ 5:20; 2 ນຟ 15:20.
15 *ກ* ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
16 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ສຳນຶກ, ຄວາມສຳນຶກ.
*ຂ* ປຖກ 3:5; 2 ນຟ 2:5, 18, 26; ມຊຢ 16:3; ແອວ 29:5; ຣລມ 14:31.

ຄວາມຊົ່ວ; ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຂໍສະແດງ
ວິທີທີ່ຈະຕັດສິນໃຫ້ແກ່ທ່ານ ເພາະວ່າທຸກ
ສິ່ງທຸກຢ່າງທີ່ເຊື້ອເຊີນໃຫ້ເຮັດຄວາມດີ,
ແລະ ຊັກຊວນໃຫ້ເຊື່ອໃນພຣະຄຣິດ, ຖືກ
ສົ່ງມາໂດຍອຳນາດ ແລະ ຂອງປະທານ
ຂອງພຣະຄຣິດ; ດັ່ງນັ້ນ ທ່ານຈະຮູ້ດ້ວຍ
ຄວາມຮູ້ອັນສົມບູນວ່າ ສິ່ງນັ້ນມາຈາກພຣະ
ເຈົ້າ.
17 ແຕ່ສິ່ງໃດກໍຕາມທີ່ຊັກຊວນມະນຸດ
ໃຫ້ເຮັດຄວາມ [ກ]ຊົ່ວ ແລະ ບໍ່ເຊື່ອໃນພຣະ
ຄຣິດ, ແລະ ປະຕິເສດພຣະອົງ, ແລະ ບໍ່
ຮັບໃຊ້ພຣະເຈົ້າ, ເມື່ອນັ້ນທ່ານຈະຮູ້ດ້ວຍ
ຄວາມຮູ້ອັນສົມບູນວ່າ ມັນມາຈາກມານ;
ເພາະມານທຳງານຕາມວິທີນີ້, ເພາະມານ
ຈະບໍ່ຊັກຊວນມະນຸດໃຫ້ເຮັດຄວາມດີ,
ແມ່ນແຕ່ຄົນດຽວກໍບໍ່ມີເລີຍ; ທັງບໍລິວານ
ຂອງມັນກໍບໍ່ເຮັດ; ທັງຄົນທີ່ຍອມຕົວຂຶ້ນຢູ່
ກັບມັນກໍບໍ່ເຮັດ.
18 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ໂດຍທີ່ເຫັນວ່າທ່ານຮູ້ຈັກຄວາມສະຫວ່າງ
ຊຶ່ງໂດຍຄວາມສະຫວ່າງນັ້ນ ທ່ານຈະຕັດ
ສິນ ຊຶ່ງຄວາມສະຫວ່າງນັ້ນຄື [ກ]ຄວາມສະ
ຫວ່າງຂອງພຣະຄຣິດ, ຈົ່ງເບິ່ງວ່າທ່ານຈະ
ບໍ່ຕັດສິນຜິດ; ເພາະທ່ານ [ຂ]ຕັດສິນຢ່າງໃດ
ພຣະເຈົ້າຈະຕັດສິນທ່ານຢ່າງນັ້ນ.
19 ດັ່ງນັ້ນ ຂ້າພະເຈົ້າຂໍວິງວອນທ່ານ,
ພີ່ນ້ອງຂອງຂ້າພະເຈົ້າ, ໃຫ້ສະແຫວງຫາ
ຢ່າງພາກພຽນໃນ [ກ]ຄວາມສະຫວ່າງຂອງ
ພຣະຄຣິດ ເພື່ອທ່ານຈະຮູ້ຈັກຄວາມດີຈາກ
ຄວາມຊົ່ວ; ແລະ ຖ້າຫາກທ່ານຈະຍຶດຖືທຸກ
ສິ່ງທີ່ດີໄວ້, ແລະ ບໍ່ຕຳນິຕິຕຽນມັນ, ທ່ານ
ຈະເປັນ [ຂ]ລູກຂອງພຣະຄຣິດຢ່າງແນ່ນອນ.
20 ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ,
ຈະເປັນໄປໄດ້ແນວໃດທີ່ທ່ານຈະຍຶດຖືທຸກ
ສິ່ງທີ່ດີໄວ້ໄດ້?
21 ແລະ ບັດນີ້ຂ້າພະເຈົ້າມາເຖິງສັດທາ
ນັ້ນ, ຊຶ່ງຂ້າພະເຈົ້າເວົ້າວ່າ ຂ້າພະເຈົ້າຈະ
ເວົ້າເຖິງ ແລະ ຂ້າພະເຈົ້າຈະບອກທ່ານ
ເຖິງວິທີທີ່ທ່ານຈະສາມາດຍຶດຖືທຸກສິ່ງທີ່ດີ
ໄວ້ໄດ້.
22 ເພາະຈົ່ງເບິ່ງ, ພຣະເຈົ້າ [ກ]ຮູ້ທຸກສິ່ງ
ໂດຍທີ່ເປັນຢູ່ຈາກເປັນນິດເຖິງເປັນນິດ,
ຈົ່ງເບິ່ງ, ພຣະອົງໄດ້ສົ່ງ [ຂ]ເຫລົ່າທູດມາ
ປະຕິບັດສາດສະໜາກິດແກ່ລູກຫລານ
ມະນຸດ, ເພື່ອສະແດງໃຫ້ປະຈັກເຖິງການ
ສະເດັດມາຂອງພຣະຄຣິດ; ແລະ ໂດຍ
ພຣະຄຣິດທຸກສິ່ງທີ່ດີຈຶ່ງຈະມີມາ.
23 ແລະ ພຣະເຈົ້າໄດ້ປະກາດກັບສາດ
ສະດາດ້ວຍພຣະໂອດຂອງພຣະອົງເອງ,
ວ່າພຣະຄຣິດຈະສະເດັດມາ.
24 ແລະ ຈົ່ງເບິ່ງ, ມີຫລາຍວິທີທີ່ພຣະອົງ
ໄດ້ສະແດງສິ່ງທີ່ດີໃຫ້ປະຈັກແກ່ລູກຫລານ
ມະນຸດ; ແລະ ທຸກສິ່ງທີ່ດີມາຈາກພຣະ
ຄຣິດ; ຖ້າບໍ່ດັ່ງນັ້ນ ມະນຸດກໍຈະ [ກ]ຕົກໄປ,
ແລະ ບໍ່ມີສິ່ງທີ່ດີມາຫາເຂົາໄດ້.
25 ດັ່ງນັ້ນ, ໂດຍການປະຕິບັດສາດສະ
ໜາກິດຂອງ [ກ]ເຫລົ່າທູດ, ແລະ ໂດຍທຸກ
ຄຳຊຶ່ງອອກມາຈາກພຣະໂອດຂອງພຣະ
ເຈົ້າ, ມະນຸດຈຶ່ງເລີ່ມໃຊ້ສັດທາໃນພຣະ
ຄຣິດ; ແລະ ໂດຍສັດທາເຊັ່ນນັ້ນ, ເຂົາຈຶ່ງ

17 *ກ* ຄມພ ບາບ.
18 *ກ* ມຊຍ 16:9; ຄພ 50:24; 88:7–13. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ປຈສ ມທ 7:1–2 (ພາກທ້ອຍທ້າຍ); ລກ 6:37; ຢຮ 7:24.
19 *ກ* ຄພ 84:45–46.
*ຂ* ມຊຍ 15:10–12; 27:25. ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
22 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* ມຊ 5:58. ຄມພ ທູດ, ເທວະດາ.
24 *ກ* 2 ນຟ 2:5.
25 *ກ* ແອວ 12:28–30.

ໄດ້ຍຶດຖືທຸກສິ່ງທີ່ດີໄວ້; ແລະ ເປັນດັ່ງນັ້ນ
ຈົນເຖິງການສະເດັດມາຂອງພຣະຄຣິດ.
26 ແລະ ຫລັງຈາກພຣະອົງໄດ້ສະເດັດ
ມາແລ້ວ ມະນຸດກໍໄດ້ຮັບຄວາມລອດໂດຍ
ການມີສັດທາໃນພຣະນາມ ຂອງພຣະອົງ;
ແລະ ໂດຍ ສັດທາ ເຂົາຈຶ່ງກາຍ ເປັນ ບຸດ
ຂອງພຣະເຈົ້າ. ແລະ ພຣະຄຣິດຊົງພຣະ
ຊົນຢູ່ຢ່າງແນ່ນອນສັນໃດ, ພຣະອົງໄດ້ຮັບ
ສັ່ງຂໍ້ຄວາມນີ້ກັບບັນພະບຸລຸດຂອງເຮົາສັນ
ນັ້ນ, ມີຄວາມວ່າ: [ກ]ສິ່ງໃດກໍຕາມທີ່ດີທີ່ເຈົ້າ
ທູນຂໍພຣະບິດາໃນນາມຂອງເຮົາ, ດ້ວຍ
ສັດທາໂດຍເຊື່ອວ່າເຈົ້າຈະໄດ້ຮັບ, ຈົ່ງເບິ່ງ,
ມັນກໍຈະເປັນໄປກັບເຈົ້າເຊັ່ນນັ້ນ.
27 ດັ່ງນັ້ນ, ພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ,
[ກ]ສິ່ງມະຫັດສະຈັນໝົດໄປແລ້ວບໍ ເພາະ
ພຣະຄຣິດໄດ້ສະເດັດຂຶ້ນໄປສະຫວັນ,
ແລະ ປະທັບຢູ່ທາງເບື້ອງຂວາພຣະຫັດ
ຂອງພຣະເຈົ້າ, ເພື່ອ [ຂ]ຮຽກຮ້ອງສິດແຫ່ງ
ຄວາມເມດຕາຈາກພຣະບິດາ ຊຶ່ງພຣະອົງ
ມີຕໍ່ລູກຫລານມະນຸດ?
28 ເພາະວ່າພຣະອົງໄດ້ຕອບທີ່ສຸດຂອງ
ກົດແລ້ວ, ແລະ ພຣະອົງຂໍຮັບເອົາຄົນທັງ
ປວງທີ່ມີສັດທາໃນພຣະອົງ; ແລະ ຄົນທີ່ມີ
ສັດທາໃນພຣະອົງຈະ [ກ]ແນບສະໜິດໃນ
ທຸກສິ່ງທີ່ດີ; ດັ່ງນັ້ນ ພຣະອົງຈຶ່ງ [ຂ]ວິງວອນ
ແທນລູກຫລານມະນຸດ; ແລະ ພຣະອົງປະ
ທັບຢູ່ເປັນນິລັນດອນໃນຟ້າສະຫວັນ.
29 ແລະ ເພາະພຣະອົງໄດ້ກະທຳການ
ນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ ສິ່ງ
ມະຫັດສະຈັນໝົດໄປແລ້ວບໍ? ຈົ່ງເບິ່ງ ຂ້າ
ພະເຈົ້າກ່າວກັບທ່ານວ່າ, ບໍ່ເລີຍ; ແລະ ທັງ
ເຫລົ່າທູດກໍບໍ່ໄດ້ເລີກປະຕິບັດສາດສະໜາ
ກິດແກ່ລູກຫລານມະນຸດເລີຍ.
30 ເພາະ ຈົ່ງ ເບິ່ງ, ພວກເພິ່ນຂຶ້ນຢູ່ກັບ
ພຣະອົງ, ເພື່ອປະຕິບັດສາດສະໜາກິດ
ຕາມຄຳບັນຊາຂອງພຣະອົງ, ໂດຍສະແດງ
ຕົວແກ່ຜູ້ມີສັດທາຢ່າງເຂັ້ມແຂງ ແລະ ມີຈິດ
ໃຈໝັ້ນຄົງໃນຄວາມເປັນເໝືອນພຣະເຈົ້າ
ທຸກແບບ.
31 ແລະ ໜ້າທີ່ປະຕິບັດສາດສະໜາ
ກິດຂອງພວກເພິ່ນຄື ຮຽກຮ້ອງມະນຸດມາ
ສູ່ການກັບໃຈ, ແລະ ເພື່ອເຮັດໃຫ້ວຽກ
ງານແຫ່ງພັນທະສັນຍາຂອງພຣະບິດາສຳ
ເລັດ, ຊຶ່ງພຣະອົງກະທຳໄວ້ກັບລູກຫລານ
ມະນຸດ, ເພື່ອຕຽມທາງໃນບັນດາລູກຫລານ
ມະນຸດ, ໂດຍການປະກາດພຣະຄຳຂອງ
ພຣະຄຣິດແກ່ພາຊະນະທີ່ພຣະຜູ້ເປັນເຈົ້າ
ເລືອກໄວ້, ເພື່ອເຂົາຈະສະແດງປະຈັກ
ພະຍານເຖິງພຣະອົງ.
32 ແລະ ໂດຍການກະທຳເຊັ່ນນັ້ນ, ອົງ
ພຣະຜູ້ເປັນເຈົ້າຈຶ່ງໄດ້ຕຽມທາງເພື່ອມະນຸດ
ທີ່ເຫລືອຢູ່ຈະມີ [ກ]ສັດທາໃນພຣະຄຣິດ, ວ່າ
ພຣະວິນຍານບໍລິສຸດຈະມີບ່ອນຢູ່ໃນໃຈ
ຂອງເຂົາຕາມອຳນາດຂອງພຣະອົງ; ແລະ
ຕາມວິທີນີ້ ພຣະບິດາຈະນຳພັນທະສັນຍາ
ມາ ຊຶ່ງພຣະອົງໄດ້ເຮັດໄວ້ກັບລູກຫລານ
ມະນຸດ.
33 ແລະ ພຣະຄຣິດໄດ້ກ່າວວ່າ: [ກ]ຖ້າ
ຫາກ ເຈົ້າມີສັດທາໃນເຮົາ, ເຈົ້າຈະມີ
ອຳນາດເຮັດສິ່ງໃດກໍໄດ້ຕາມທີ່ເຮົາເຫັນວ່າ
[ຂ]ສົມຄວນ.
34 ແລະ ພຣະອົງໄດ້ກ່າວວ່າ: ຈົ່ງ [ກ]ກັບ

26 *ກ* 3 ນຟ 18:20.
ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
27 *ກ* ຄມພ ມະຫັດສະຈັນ, ການມະຫັດສະຈັນ.
*ຂ* ອຊຢ 53:12; ມຊຢ 14:12.
28 *ກ* ຣມ 12:9; ຄພ 98:11.
*ຂ* 1 ຢຮ 2:1; 2 ນຟ 2:9. ຄມພ ວິງວອນແທນ, ຜູ້ວິງວອນແທນ.
32 *ກ* ຄມພ ສັດທາ.
33 *ກ* ມທ 17:20.
*ຂ* ຄພ 88:64–65.
34 *ກ* 3 ນຟ 27:20; ອທ 4:18.

ໃຈເຖີດ ເຈົ້າທັງຫລາຍທີ່ສຸດຂອງແຜ່ນດິນ
ໂລກ, ແລະ ຈົ່ງມາຫາເຮົາ, ແລະ ຮັບບັບຕິ
ສະມາ ໃນພຣະ ນາມຂອງ ເຮົາ, ແລະ ມີ
ສັດທາໃນເຮົາ, ເພື່ອເຈົ້າຈະລອດ.
35 ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະ ເຈົ້າ, ຖ້າ ຫາກ ເປັນ ໄປວ່າເລື່ອງ
ເຫລົ່ານີ້ຊຶ່ງຂ້າພະເຈົ້າໄດ້ເວົ້າກັບທ່ານເປັນ
ຄວາມຈິງແລ້ວ ພຣະເຈົ້າຈະສະແດງແກ່
ທ່ານດ້ວຍ [ກ]ອຳນາດ ແລະ ລັດສະໝີພາບ
ອັນຍິ່ງໃຫຍ່ໃນ [ຂ]ວັນສຸດທ້າຍ, ວ່າເລື່ອງ
ເຫລົ່ານີ້ເປັນຄວາມຈິງ, ແລະ ຖ້າຫາກມັນ
ເປັນຄວາມຈິງ ວັນແຫ່ງສິ່ງມະຫັດສະຈັນ
ໝົດໄປແລ້ວບໍ?
36 ຫລື ເຫລົ່າທູດເລີກມາປະກົດຕົວແກ່
ລູກຫລານມະນຸດແລ້ວບໍ? ຫລື ພຣະອົງໄດ້
[ກ]ເກັບອຳນາດຂອງພຣະວິນຍານບໍລິສຸດ
ໄປຈາກເຂົາແລ້ວບໍ? ຫລື ພຣະອົງຈະກະ
ທຳ ຕາບໃດທີ່ເວລາຍັງເຫລືອຢູ່, ຫລື ໂລກ
ຍັງຕັ້ງຢູ່, ຫລື ຍັງມີຄົນຜູ້ດຽວເຫລືອຢູ່ໃນ
ພື້ນແຜ່ນດິນໂລກທີ່ຈະຊ່ວຍໃຫ້ລອດ?
37 ຈົ່ງເບິ່ງຂ້າພະເຈົ້າກ່າວກັບທ່ານວ່າ,
ບໍ່ເລີຍ; ເພາະເປັນຍ້ອນສັດທາ [ກ]ສິ່ງມະຫັດ
ສະຈັນຈຶ່ງເກີດຂຶ້ນ; ແລະ ເປັນຍ້ອນສັດທາ
ເຫລົ່າທູດຈຶ່ງໄດ້ມາປະກົດຕົວ ແລະ ປະ
ຕິບັດສາດສະໜາກິດແກ່ມະນຸດ; ດັ່ງນັ້ນ,
ຖ້າຫາກສິ່ງເຫລົ່ານີ້ໝົດໄປ ວິບັດຍ່ອມມີ
ແກ່ລູກຫລານມະນຸດ, ເພາະມັນເປັນຍ້ອນ
[ຂ]ຄວາມບໍ່ເຊື່ອຖື, ແລະ ທຸກສິ່ງກໍບໍ່ມີປະ
ໂຫຍດ.
38 ເພາະຕາມພຣະຄຳຂອງພຣະຄຣິດ
ແລ້ວ, ບໍ່ມີຜູ້ໃດຈະລອດໄດ້ນອກຈາກເຂົາ
ຈະມີສັດທາໃນພຣະນາມຂອງພຣະອົງ;
ດັ່ງນັ້ນ, ຖ້າຫາກສິ່ງເຫລົ່ານີ້ໝົດໄປ, ແລ້ວ
ສັດທາກໍໝົດໄປຄືກັນ; ແລະ ສະພາບຂອງ
ມະນຸດຈະເປັນຕາຢ້ານຫລາຍຂະໜາດ
ໃດ, ເພາະເຂົາຈະເປັນຄືກັນກັບວ່າບໍ່ມີ
ການໄຖ່ກະທຳຂຶ້ນເລີຍ.
39 ແຕ່ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງ
ຂ້າພະເຈົ້າ, ຂ້າພະເຈົ້າຕັດສິນສິ່ງທີ່ດີກວ່າ
ນີ້ຈາກທ່ານ, ເພາະຂ້າພະເຈົ້າຕັດສິນວ່າ
ທ່ານມີສັດທາໃນພຣະຄຣິດເພາະຄວາມ
ອ່ອນໂຍນຂອງທ່ານ ເພາະຖ້າຫາກທ່ານ
ບໍ່ມີສັດທາໃນພຣະອົງແລ້ວ, ທ່ານກໍບໍ່
[ກ]ເໝາະສົມທີ່ຈະຖືກນັບເຂົ້າຢູ່ໃນບັນດາຜູ້
ຄົນຂອງສາດສະໜາຈັກຂອງພຣະອົງ.
40 ແລະ ອີກຢ່າງໜຶ່ງ, ພີ່ນ້ອງທີ່ຮັກແພງ
ຂອງຂ້າພະເຈົ້າ, ຂ້າພະເຈົ້າຂໍເວົ້າກັບທ່ານ
ກ່ຽວກັບ [ກ]ຄວາມຫວັງ. ທ່ານຈະບັນລຸເຖິງ
ສັດທາໄດ້ແນວໃດຖ້າຫາກທ່ານບໍ່ມີຄວາມ
ຫວັງ?
41 ແລະ ແມ່ນ ອັນ ໃດ ທີ່ ທ່ານ ຈະ ມີ
[ກ]ຄວາມຫວັງຕໍ່? ຈົ່ງເບິ່ງ ຂ້າພະເຈົ້າກ່າວ
ກັບທ່ານວ່າ ທ່ານຈະມີ [ຂ]ຄວາມຫວັງໂດຍ
ທາງການຊົດໃຊ້ຂອງພຣະຄຣິດ ແລະ
ໂດຍອຳນາດຂອງການຟື້ນຄືນພຣະຊົນ
ຂອງພຣະອົງ, ເພື່ອຖືກຍົກຂຶ້ນສູ່ [ຄ]ຊີວິດນິ
ລັນດອນ, ແລະ ນີ້ເພາະສັດທາຂອງທ່ານທີ່
ມີໃນພຣະອົງຕາມສັນຍາ.
42 ດັ່ງນັ້ນ, ຖ້າຫາກຜູ້ໃດມີ [ກ]ສັດທາກໍ
[ຂ]ຈຳຕ້ອງມີຄວາມຫວັງ; ເພາະວ່າປາດສະ
ຈາກສັດທາຈະມີຄວາມຫວັງບໍ່ໄດ້ເລີຍ.
43 ແລະ ອີກຢ່າງໜຶ່ງ, ຈົ່ງເບິ່ງຂ້າພະເຈົ້າ

35 ກ 2 ນຟ 33:11.
ຂ ຄພ 35:8.
36 ກ ມຣນ 10:4–5, 7, 19.
37 ກ ມທ 13:58;
ມມ 9:20;
ອທ 12:12–18.
ຂ ມຣນ 10:19–24.
39 ກ ຄມພ ຄ່າຄວນ, ການ
ມີຄ່າຄວນ.
40 ກ ອທ 12:4.
ຄມພ ຫວັງ, ຄວາມຫວັງ.
41 ກ ຄພ 138:14.
ຂ ຕຕ 1:2; ຢຄ 4:4;
ແອວ 25:16;
ມຣນ 9:25.
ຄ ຄມພ ຊີວິດນິລັນດອນ.
42 ກ ຄມພ ສັດທາ.
ຂ ມຣນ 10:20.

ກ່າວກັບທ່ານວ່າ ມະນຸດຈະມີສັດທາ ແລະ ຄວາມຫວັງບໍ່ໄດ້, ນອກຈາກວ່າ ເຂົາຈະມີ [ກ]ໃຈອ່ອນໂຍນ ແລະ ຕ່ຳຕ້ອຍ.

44 ຖ້າຫາກເປັນເຊັ່ນນັ້ນ, [ກ]ສັດທາ ແລະ ຄວາມຫວັງ ຂອງ ເຂົາກໍບໍ່ ມີ ປະໂຫຍດ ເພາະວ່າຄົນເຊັ່ນນັ້ນຈະບໍ່ເປັນທີ່ຍອມຮັບຕໍ່ພຣະພັກຂອງພຣະເຈົ້າ ນອກຈາກຜູ້ທີ່ມີໃຈອ່ອນໂຍນ ແລະ ຕ່ຳຕ້ອຍ, ແລະ ຖ້າຫາກຜູ້ໃດອ່ອນໂຍນ ແລະ ຕ່ຳຕ້ອຍໃນໃຈ, ແລະ [ຂ]ສາລະພາບໂດຍອຳນາດຂອງພຣະວິນຍານບໍລິສຸດວ່າພຣະເຢຊູຄື ພຣະຄຣິດ, ຜູ້ນັ້ນຕ້ອງມີຄວາມໃຈບຸນ, ເພາະຖ້າຫາກເຂົາບໍ່ມີຄວາມໃຈບຸນ ເຂົາກໍບໍ່ເປັນອັນໃດເລີຍ; ດັ່ງນັ້ນ ເຂົາຕ້ອງມີຄວາມໃຈບຸນ.

45 ແລະ [ກ]ຄວາມໃຈບຸນອົດທົນໄດ້ດົນນານ, ແລະ ມີຄວາມເມດຕາ, ແລະ ບໍ່ [ຂ]ອິດສາບັງບຽດ, ແລະ ບໍ່ອວດອົ່ງ, ແລະ ບໍ່ສະແຫວງຫາເພື່ອຕົນເອງ, ບໍ່ຄຽດງ່າຍ, ບໍ່ຄິດຊົ່ວ, ແລະ ບໍ່ປິຕິຍິນດີໃນຄວາມຊົ່ວຮ້າຍ ແຕ່ປິຕິຍິນດີໃນຄວາມຈິງ, ທົນແບກຫາບທຸກສິ່ງ, ເຊື່ອທຸກສິ່ງ, ຫວັງທຸກສິ່ງ, ອົດທົນທຸກສິ່ງ.

46 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຖ້າຫາກທ່ານບໍ່ມີຄວາມໃຈບຸນ, ທ່ານກໍບໍ່ມີຄ່າອັນໃດເລີຍ, ເພາະຄວາມໃຈບຸນດຳລົງຢູ່ຕະຫລອດໄປ. ດັ່ງນັ້ນ, ຈົ່ງຍຶດໝັ້ນຢູ່ກັບຄວາມໃຈບຸນ, ຊຶ່ງເປັນສິ່ງທີ່ຍິ່ງໃຫຍ່ທີ່ສຸດໃນທຸກສິ່ງ, ເພາະວ່າທຸກສິ່ງຕ້ອງໝົດສິ້ນໄປ—

47 ແຕ່ [ກ]ຄວາມໃຈບຸນຄື [ຂ]ຄວາມຮັກອັນບໍລິສຸດຂອງພຣະຄຣິດ, ແລະ ມັນອົດທົນຕະຫລອດການ; ແລະ ຜູ້ໃດຖືກພົບວ່າມີມັນໃນວັນສຸດທ້າຍ, ຍ່ອມຈະເປັນການດີກັບຜູ້ນັ້ນ.

48 ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຈົ່ງ [ກ]ອະທິຖານຫາພຣະບິດາດ້ວຍສຸດພະລັງແຫ່ງໃຈ, ເພື່ອທ່ານຈະເຕັມໄປດ້ວຍຄວາມຮັກນີ້, ຊຶ່ງພຣະອົງປະທານໃຫ້ທຸກຄົນຊຶ່ງເປັນ [ຂ]ຜູ້ຕິດຕາມທີ່ແທ້ຈິງຂອງພຣະເຢຊູຄຣິດ, ພຣະບຸດຂອງພຣະອົງ; ເພື່ອທ່ານຈະໄດ້ກາຍເປັນບຸດຂອງພຣະເຈົ້າ; ເພື່ອວ່າ ເມື່ອພຣະອົງສະເດັດມາ ເຮົາຈະ [ຄ]ເປັນເໝືອນດັ່ງພຣະອົງ, ເພາະວ່າເຮົາຈະເຫັນພຣະອົງຢ່າງທີ່ພຣະອົງເປັນຢູ່ນັ້ນ, ເພື່ອເຮົາຈະມີຄວາມຫວັງນີ້; ເພື່ອເຮົາຈະຖືກ [ງ]ເຮັດໃຫ້ບໍລິສຸດຄືກັນກັບພຣະອົງທີ່ບໍລິສຸດ. ອາແມນ.

## ບົດທີ 8

*ການບັບຕິສະມາໃຫ້ເດັກນ້ອຍໆເປັນຄວາມຊົ່ວທີ່ໜ້າກຽດຊັງ—ເດັກນ້ອຍໆໄດ້ຮັບຄວາມລອດເພາະການຊົດໃຊ້ຂອງພຣະຄຣິດ—ສັດທາ, ການກັບໃຈ, ການມີໃຈອ່ອນໂຍນ ແລະ ຄວາມຕ່ຳຕ້ອຍໃນໃຈ, ການຮັບເອົາພຣະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດຈະນຳໄປສູ່ຄວາມລອດ. ປະມານ ຄ.ສ. 401–421.*

---

43 *ກ* ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
44 *ກ* ແອວ 7:24; ອທ 12:28–34.
*ຂ* ລກ 12:8–9. ຄມພ ສາລະພາບ, ການສາລະພາບ; ປະຈັກພະຍານ.
45 *ກ* 1 ກຣທ 13.
*ຂ* ຄມພ ອິດສາ.
47 *ກ* 2 ນຟ 26:30. ຄມພ ໃຈບຸນ, ຄວາມໃຈບຸນ.
*ຂ* ຢຊ 22:5. ຄມພ ຮັກ, ຄວາມຮັກ.
48 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ; ພຣະເຢຊູຄຣິດ—ຕົວຢ່າງຂອງພຣະເຢຊູຄຣິດ.
*ຄ* 1 ຢຮ 3:1–3; 3 ນຟ 27:27.
*ງ* 3 ນຟ 19:28–29. ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.

1 ສານສະບັບໜຶ່ງຂອງ [ກ]ບິດາຂອງຂ້າພະເຈົ້ານໍມໍອນທີ່ຂຽນຫາຂ້າພະເຈົ້າໂມໂຣໄນ; ແລະ ເພິ່ນໄດ້ຂຽນຫາຂ້າພະເຈົ້າບໍ່ດົນຫລັງຈາກການເອີ້ນສູ່ການປະຕິບັດສາດສະໜາກິດຂອງຂ້າພະເຈົ້າ. ແລະ ເພິ່ນໄດ້ຂຽນຫາຂ້າພະເຈົ້າໃນທຳນອງນີ້, ມີຄວາມວ່າ:

2 ໂມໂຣໄນລູກທີ່ຮັກຂອງພໍ່, ພໍ່ມີຄວາມປິຕິຍິນດີຢ່າງຍິ່ງທີ່ອົງພຣະເຢຊູຄຣິດເຈົ້າຂອງລູກນຶກເຖິງລູກ, ແລະ ເອີ້ນລູກມາສູ່ການປະຕິບັດສາດສະໜາກິດຂອງພຣະອົງ, ແລະ ມາສູ່ວຽກງານອັນສັກສິດຂອງພຣະອົງ.

3 ພໍ່ນຶກເຖິງລູກສະເໝີໃນຄຳອະທິຖານຂອງພໍ່, ໂດຍການອະທິຖານຫາພຣະເຈົ້າອົງເປັນພຣະບິດາຕະຫລອດເວລາ ໃນພຣະນາມຂອງພຣະເຢຊູ, ພຣະບຸດຜູ້ບໍລິສຸດຂອງພຣະອົງ, ເພື່ອໂດຍທາງ [ກ]ພຣະກະລຸນາທິຄຸນ ແລະ [ຂ]ພຣະຄຸນອັນບໍ່ມີຂອບເຂດຂອງພຣະອົງ, ພຣະອົງຈະປົກປັກຮັກສາລູກໂດຍທາງຄວາມອົດທົນແຫ່ງສັດທາໃນພຣະນາມຂອງພຣະອົງຈົນເຖິງທີ່ສຸດ.

4 ແລະ ບັດນີ້, ລູກຂອງພໍ່, ພໍ່ຂໍເວົ້າກັບລູກກ່ຽວກັບເລື່ອງທີ່ເຮັດໃຫ້ພໍ່ໂສກເສົ້າຫລາຍທີ່ສຸດ; ເພາະມັນເຮັດໃຫ້ພໍ່ໂສກເສົ້າທີ່ມີ [ກ]ການໂຕ້ຖຽງກັນຢູ່ໃນບັນດາພວກລູກ.

5 ເພາະຖ້າຫາກເລື່ອງທີ່ພໍ່ຮູ້ມານັ້ນເປັນຄວາມຈິງ, ມັນໄດ້ມີການໂຕ້ຖຽງກັນໃນບັນດາພວກລູກກ່ຽວກັບການບັບຕິສະມາໃຫ້ແກ່ເດັກນ້ອຍໆ.

6 ແລະ ບັດນີ້, ລູກຂອງພໍ່, ພໍ່ປາດຖະໜາໃຫ້ລູກເຮັດວຽກຢ່າງພາກພຽນ, ເພື່ອຈະເອົາຄວາມຜິດອັນຮ້າຍແຮງນີ້ໄປຈາກບັນດາພວກລູກ; ເພາະດ້ວຍເຈດຕະນານີ້ ພໍ່ຈຶ່ງໄດ້ຂຽນສານມາຫາລູກ.

7 ເພາະໃນທັນທີທີ່ພໍ່ຮູ້ຈັກເລື່ອງເຫລົ່ານີ້ກ່ຽວກັບພວກລູກ ພໍ່ກໍໄດ້ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບເລື່ອງນີ້. ແລະ [ກ]ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງພໍ່ໂດຍອຳນາດຂອງພຣະວິນຍານບໍລິສຸດ, ມີຄວາມວ່າ:

8 ຈົ່ງຟັງພຣະຄຳຂອງພຣະຄຣິດ, ພຣະຜູ້ໄຖ່ຂອງລູກ, ພຣະຜູ້ເປັນເຈົ້າ ແລະ ພຣະເຈົ້າຂອງເຈົ້າ. ຈົ່ງເບິ່ງ, ເຮົາມາໃນໂລກນີ້ບໍ່ແມ່ນເພື່ອເອີ້ນເອົາຄົນຊອບທຳ ແຕ່ເພື່ອເອີ້ນເອົາຄົນບາບມາສູ່ການກັບໃຈ; [ກ]ຄົນທີ່ສະບາຍບໍ່ຕ້ອງການໝໍ, ແຕ່ຄົນທີ່ເຈັບປ່ວຍຕ້ອງການໝໍ; ດັ່ງນັ້ນ, [ຂ]ເດັກນ້ອຍໆ [ຄ]ເປັນຄົນດີເພາະພວກເຂົາບໍ່ສາມາດເຮັດ [ງ]ບາບໄດ້; ດັ່ງນັ້ນ ໃນເຮົາ, ການສາບແຊ່ງທີ່ມີກັບ [ຈ]ອາດາມຈຶ່ງຖືກເອົາໄປຈາກເຂົາ; ແລະ ໃນເຮົາ, ກົດກ່ຽວກັບ [ສ]ພິທີຕັດຈຶ່ງຖືກເອົາໄປຈາກເຂົາ.

9 ແລະ ພຣະວິນຍານບໍລິສຸດໄດ້ສະແດງພຣະຄຳຂອງພຣະເຈົ້າໃຫ້ປະຈັກແກ່ພໍ່ຕາມນີ້; ດັ່ງນັ້ນ, ລູກທີ່ຮັກຂອງພໍ່, ພໍ່ຮູ້ວ່າມັນເປັນການເຍາະເຍີ້ຍພຣະເຈົ້າຢ່າງຮຸນແຮງທີ່ພວກລູກຈະໃຫ້ບັບຕິສະມາແກ່ເດັກນ້ອຍໆ.

10 ຈົ່ງເບິ່ງ ພໍ່ກ່າວກັບລູກວ່າ ລູກຈົ່ງສິດສອນເລື່ອງຕໍ່ໄປນີ້—ເຊັ່ນ ການກັບໃຈ ແລະ ການບັບຕິສະມາໃຫ້ຄົນທີ່ [ກ]ຮູ້ຈັກຮັບຜິດຊອບ ແລະ ສາມາດເຮັດບາບໄດ້; ແທ້

8 1 ກ ຄມ 1:1.
3 ກ ມຊຢ 4:11.
ຂ ຄມພ ພຣະຄຸນ.
4 ກ 3 ນຟ 11:22, 28; 18:34.
7 ກ ຄມພ ພຣະຄຳຂອງພຣະເຈົ້າ.
8 ກ ມຣກ 2:17.
ຂ ມຣກ 10:13–16.
ຄ ມຊຢ 3:16; ຄພ 74:7.
ງ ຄມພ ບາບ.
ຈ 2 ນຟ 2:25–27. ຄມພ ການຕົກຂອງອາດາມ ແລະ ເອວາ.
ສ ປຖກ 17:10–11. ຄມພ ພິທີຕັດ.
10 ກ ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.

ຈິງແລ້ວ, ຈົ່ງສິດສອນຜູ້ເປັນບິດາມານດາ
ວ່າ ພວກເຂົາຕ້ອງກັບໃຈ ແລະ ຮັບບັບຕິ
ສະມາ, ແລະ ຖ່ອມ ຕົວ ຄື ກັນ ກັບ [ຂ]ລູກ
ນ້ອຍໆຂອງພວກເຂົາ, ແລ້ວພວກເຂົາຈະ
ໄດ້ຮັບຄວາມລອດພ້ອມກັບ ລູກນ້ອຍໆ
ຂອງພວກເຂົາທັງໝົດ.
11 ແລະ [ກ]ລູກນ້ອຍໆຂອງພວກເຂົາບໍ່
ຕ້ອງການການກັບໃຈ ຫລື ຮັບບັບຕິສະມາ.
ຈົ່ງເບິ່ງ, ການບັບຕິສະມາແມ່ນກະທຳໄວ້
ກັບການກັບໃຈເພື່ອຈະເຮັດໃຫ້ພຣະບັນ
ຍັດສຳເລັດ ອັນນຳໄປສູ່ [ຂ]ການປົດບາບ.
12 ແຕ່ [ກ]ເດັກນ້ອຍໆມີຊີວິດຢູ່ໃນພຣະ
ຄຣິດ, ເຖິງແມ່ນຕັ້ງແຕ່ການວາງຮາກຖານ
ຂອງໂລກມາ; ຖ້າຫາກບໍ່ເປັນດັ່ງນັ້ນ, ພຣະ
ເຈົ້າກໍຄົງເປັນພຣະເຈົ້າທີ່ບໍ່ຍຸດຕິທຳ, ແລະ
ເປັນພຣະເຈົ້າທີ່ປ່ຽນແປງຢູ່ສະເໝີ ແລະ
[ຂ]ເລືອກໜ້າຄົນ; ເພາະວ່າມີເດັກນ້ອຍໆຈັກ
ຄົນແລ້ວທີ່ຕາຍໄປໂດຍປາດສະຈາກການ
ບັບຕິສະມາ!
13 ດັ່ງນັ້ນ, ຖ້າຫາກເດັກນ້ອຍໆຈະລອດ
ບໍ່ໄດ້ໂດຍປາດສະຈາກການບັບຕິສະມາ,
ພວກເຂົາເຫລົ່ານັ້ນກໍຕ້ອງຕົກໄປສູ່ນະລົກ
ອັນບໍ່ມີບ່ອນສິ້ນສຸດ.
14 ຈົ່ງເບິ່ງ ພໍ່ກ່າວກັບລູກວ່າ, ຄົນທີ່ຄິດ
ວ່າເດັກນ້ອຍໆຕ້ອງໄດ້ຮັບ ບັບຕິສະມາ
ຍ່ອມຢູ່ໃນນ້ຳບີ ແຫ່ງຄວາມຂົມຂື່ນ ແລະ
ໃນພັນທະການແຫ່ງຄວາມຊົ່ວຮ້າຍ; ເພາະ
ເຂົາບໍ່ມີ [ກ]ສັດທາ, ຄວາມຫວັງ, ຫລື ຄວາມ
ໃຈບຸນເລີຍ; ດັ່ງນັ້ນ, ຖ້າຫາກເຂົາຖືກຕັດ
ອອກໄປໃນຂະນະທີ່ຢູ່ໃນຄວາມຄິດນັ້ນ,
ເຂົາຈະຕ້ອງຕົກໄປສູ່ນະລົກ.
15 ເພາະ ມັນ ເປັນ ຄວາມຊົ່ວຮ້າຍອັນ
ເປັນຕາຢ້ານທີ່ຈະຄິດວ່າພຣະເຈົ້າຊ່ວຍ
ເດັກນ້ອຍຄົນໜຶ່ງໃຫ້ໄດ້ຮັບຄວາມລອດ
ເພາະການບັບຕິສະມາ, ແລະ ອີກຄົນໜຶ່ງ
ຕ້ອງຕົກໄປສູ່ຄວາມອັບປະໂຫຍດຍ້ອນວ່າ
ບໍ່ໄດ້ຮັບບັບຕິສະມາ.
16 ວິບັດ ແກ່ຄົນທີ່ບິດເບືອນທາງຂອງ
ພຣະຜູ້ເປັນເຈົ້າຕາມນີ້ ເພາະເຂົາຈະຕົກ
ໄປສູ່ຄວາມອັບປະໂຫຍດຖ້າຫາກເຂົາບໍ່
ກັບໃຈ. ຈົ່ງເບິ່ງ, ພໍ່ເວົ້າດ້ວຍຄວາມອາດ
ຫານ ໂດຍມີ [ກ]ສິດອຳນາດຈາກພຣະເຈົ້າ;
ແລະ ພໍ່ບໍ່ມີຄວາມຢ້ານກົວຕໍ່ອຳນາດຂອງ
ມະນຸດ; ເພາະ [ຂ]ຄວາມຮັກທີ່ສົມບູນຍ່ອມ
ຂັບໄລ່ຄວາມຢ້ານກົວທັງໝົດ [ຄ]ອອກໄປ.
17 ແລະ ພໍ່ເຕັມໄປດ້ວຍ [ກ]ຄວາມໃຈບຸນ,
ຊຶ່ງເປັນຄວາມຮັກອັນເປັນນິດ; ດັ່ງນັ້ນ, ສຳ
ລັບພໍ່ແລ້ວເດັກນ້ອຍທຸກຄົນເທົ່າທຽມກັນ
ໝົດ; ດັ່ງນັ້ນ, ພໍ່ຈຶ່ງຮັກ [ຂ]ເດັກນ້ອຍໆທຸກ
ຄົນດ້ວຍຄວາມຮັກທີ່ສົມບູນ; ແລະ ເຂົາ
ເທົ່າທຽມກັນໝົດ ແລະ ເປັນຜູ້ມີສ່ວນໃນ
ຄວາມລອດ.
18 ເພາະພໍ່ຮູ້ວ່າ ພຣະເຈົ້າບໍ່ເປັນພຣະ
ເຈົ້າທີ່ບໍ່ຍຸດຕິທຳ, ທັງບໍ່ເປັນຜູ້ທີ່ປ່ຽນແປງຢູ່
ສະເໝີ; ແຕ່ພຣະອົງຈະບໍ່ມີ [ກ]ວັນປ່ຽນແປງ
ຈາກຊົ່ວນິລັນດອນເຖິງ [ຂ]ຊົ່ວນິລັນດອນ.
19 [ກ]ເດັກນ້ອຍໆບໍ່ສາມາດກັບໃຈ; ດັ່ງ
ນັ້ນ, ຈຶ່ງເປັນຄວາມຊົ່ວຮ້າຍອັນເປັນຕາ

---

10 *ຂ* ຄມພ ເດັກ, ເດັກນ້ອຍ; ຖ່ອມຕົນ, ຄວາມຖ່ອມຕົນ.
11 *ກ* ຄມພ ເດັກ, ເດັກນ້ອຍ; ບັບຕິສະມາ, ໃຫ້ບັບຕິສະມາ—ເງື່ອນໄຂສຳລັບການບັບຕິສະມາ.
*ຂ* ຄມພ ປົດບາບ, ການປົດບາບ.
12 *ກ* ຄພ 29:46–47; 93:38.
*ຂ* ອຟຊ 6:9; 2 ນຟ 26:33; ຄພ 38:16.
14 *ກ* 1 ກຣທ 13; ອທ 12:6; ມຣນ 7:25–28; 10:20–23.
16 *ກ* ຄມພ ສິດອຳນາດ.
*ຂ* ຄມພ ຮັກ, ຄວາມຮັກ.
*ຄ* 1 ຢຮ 4:18.
17 *ກ* ຄມພ ໃຈບຸນ, ຄວາມໃຈບຸນ.
*ຂ* ມຊຢ 3:16–19.
18 *ກ* ແອວ 7:20; ມມ 9:9. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* ມຣນ 7:22.
19 *ກ* ລກ 18:15–17.

ຢ້ານ ທີ່ ຈະ ປະ ຕິ ເສດ ພຣະ ເມດ ຕາ ອັນ ບໍ
ລິ ສຸດ ຂ ອງ ພຣະ ເຈົ້າ ທີ່ ພຣະ ອົງ ມີ ຕໍ່ ເຂົາ,
ເພາະ ເຂົາ ທັງ ໝົດ ມີ ຊີ ວິດ ຢູ່ ໃນ ພຣະ ອົງ
ເພາະ [ຂ]ພຣະເມດຕາຂອງພຣະອົງ.
20 ແລະ ຄົນທີ່ເວົ້າວ່າເດັກນ້ອຍໆຕ້ອງ
ຮັບບັບຕິສະມາຍ່ອມປະຕິເສດພຣະເມດ
ຕາຂອງພຣະຄຣິດ, ແລະ ຖືວ່າ [ກ]ການຊົດ
ໃຊ້ ແລະ ອຳນາດແຫ່ງການໄຖ່ຂອງພຣະ
ອົງບໍ່ມີຄ່າ.
21 ວິບັດແກ່ຄົນເຊັ່ນນັ້ນ, ເພາະເຂົາຢູ່ໃນ
ຂັ້ນອັນຕະລາຍແຫ່ງຄວາມຕາຍ, [ກ]ນະລົກ,
ແລະ ຄວາມທໍລະມານທີ່ [ຂ]ບໍ່ມີວັນສິ້ນສຸດ;
ພໍ່ເວົ້າເລື່ອງນີ້ຢ່າງອາດຫານ ເພາະພຣະ
ເຈົ້າບັນຊາພໍ່ໃຫ້ເວົ້າ. ຈົ່ງຟັງເລື່ອງເຫລົ່ານີ້
ແລະ ຈົ່ງເອົາໃຈໃສ່, ຖ້າບໍ່ດັ່ງນັ້ນ ມັນຈະ
ຢືນກ່າວໂທດລູກທີ່ [ຄ]ບັນລັງພິພາກສາຂອງ
ພຣະຄຣິດ.
22 ເພາະຈົ່ງເບິ່ງ ເດັກນ້ອຍໆທຸກຄົນ [ກ]ມີ
ຊີວິດຢູ່ໃນພຣະຄຣິດ, ແລະ ລວມທັງທຸກ
ຄົນທີ່ຢູ່ໂດຍປາດສະຈາກ [ຂ]ກົດ. ເພາະວ່າ
ອຳນາດແຫ່ງ [ຄ]ການໄຖ່ມາເຖິງເຂົາທຸກຄົນ
ທີ່ບໍ່ມີກົດ; ດັ່ງນັ້ນ, ຄົນທີ່ບໍ່ຖືກກ່າວໂທດ,
ຫລື ຄົນທີ່ບໍ່ຢູ່ພາຍໃຕ້ການກ່າວໂທດ ຍ່ອມ
ກັບໃຈບໍ່ໄດ້; ແລະ ການບັບຕິສະມາຈະບໍ່ມີ
ຜົນປະໂຫຍດຫຍັງເລີຍແກ່ຄົນເຫລົ່ານັ້ນ—
23 ແຕ່ວ່າມັນເປັນການເຍາະເຍີ້ຍພຣະ
ເຈົ້າ, ເປັນການປະຕິເສດພຣະເມດຕາຂອງ
ພຣະຄຣິດ, ແລະ ອຳນາດຂອງພຣະວິນຍານ
ສັກສິດຂອງພຣະອົງ, ແລະ ເປັນການໃຫ້
ຄວາມໄວ້ວາງໃຈໃນ [ກ]ວຽກງານທີ່ບໍ່ມີຄ່າ.
24 ຈົ່ງເບິ່ງ, ລູກຂອງພໍ່, ບໍ່ຄວນຈະໃຫ້ມີ
ເລື່ອງເຊັ່ນນີ້ເກີດຂຶ້ນເລີຍ; ເພາະ [ກ]ການກັບ
ໃຈແມ່ນສຳລັບຜູ້ທີ່ຝ່າຝືນກົດເຫລົ່ານັ້ນ.
25 ແລະ ຜົນທຳອິດຂອງ [ກ]ການກັບໃຈຄື
[ຂ]ການບັບຕິສະມາ; ແລະ ການບັບຕິສະມາ
ມາໂດຍສັດທາ ອັນນຳໄປສູ່ການເຮັດໃຫ້
ພຣະບັນຍັດສຳເລັດ; ແລະ ການເຮັດໃຫ້
ພຣະບັນຍັດສຳເລັດນຳມາຊຶ່ງ [ຄ]ການປົດ
ບາບ.
26 ແລະ ການປົດບາບນຳມາຊຶ່ງ [ກ]ຄວາມ
ອ່ອນ ໂຍນ, ແລະ ຄວາມຕ່ຳ ຕ້ອຍ ໃນ ໃຈ;
ແລະ ເພາະຄວາມອ່ອນໂຍນ ແລະ ຄວາມ
ຕ່ຳ ຕ້ອຍ ໃນ ໃຈ ການ ມາ ຢ້ຽມ ຢາມ ຂອງ
[ຂ]ພຣະ ວິນ ຍານ ບໍ ລິ ສຸດ ຍ່ອມ ມາ ເຖິງ ຊຶ່ງ
[ຄ]ພຣະ ຜູ້ ປອບ ໂຍນ ເຮັດ ໃຫ້ ເຕັມ ປ່ຽມ ໄປ
ດ້ວຍ [ງ]ຄວາມຫວັງ ແລະ [ຈ]ຄວາມຮັກທີ່ສົມ
ບູນ, ຊຶ່ງຄວາມຮັກນັ້ນອົດທົນດ້ວຍ [ສ]ຄວາມ
ພາກພຽນຕໍ່ [ຊ]ການອະທິຖານຈົນທີ່ສຸດຈະ
ມາເຖິງ, ເມື່ອ [ຍ]ໄພ່ພົນຂອງພຣະເຈົ້າທັງ
ໝົດຈະໄດ້ຢູ່ກັບພຣະເຈົ້າ.
27 ຈົ່ງເບິ່ງ, ລູກຂອງພໍ່, ພໍ່ຈະຂຽນຫາລູກ
ອີກຖ້າຫາກພໍ່ບໍ່ໄດ້ໄປຕໍ່ສູ້ກັບຊາວເລມັນ

19 ຂ ຄມພ ເມດຕາ, ມີເມດ ຕາ, ຄວາມເມດຕາ.
20 ກ ຄມພ ຊົດໃຊ້, ການຊົດໃຊ້; ແຜນແຫ່ງການໄຖ່.
21 ກ ຄມພ ນະລົກ.
ຂ ຢຄ 6:10; ມຊຢ 28:3; ຄພ 19:10–12.
ຄ ຄມພ ພຣະເຢຊູ ຄຣິດ—ພິພາກສາ.
22 ກ ຄມພ ລອດ, ຄວາມ ລອດ—ຄວາມລອດ ຂອງເດັກນ້ອຍ.
ຂ ກຈກ 17:30; ຄພ 76:71–72.
ຄ ຄມພ ໄຖ່, ການໄຖ່, ຖືກໄຖ່.
23 ກ ຄພ 22:2.
24 ກ ຄມພ ກັບໃຈ, ການກັບໃຈ.
25 ກ ຄມພ ບັບຕິສະມາ, ໃຫ້ ບັບຕິສະມາ—ເງື່ອນໄຂ ສຳລັບການບັບຕິສະມາ.
ຂ ມຊ 6:58–60.
ຄ ຄພ 76:52. ຄມພ ປົດບາບ, ການປົດບາບ.
26 ກ ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
ຂ ຄມພ ພຣະວິນຍານບໍລິສຸດ.
ຄ ຄມພ ພຣະຜູ້ປອບໂຍນ.
ງ ຄມພ ຫວັງ, ຄວາມຫວັງ.
ຈ 1 ປຕ 1:22; 1 ນຟ 11:22–25.
ສ ຄມພ ພາກພຽນ, ຄວາມພາກພຽນ.
ຊ ຄມພ ອະທິຖານ, ການອະ ທິຖານ, ຄຳອະທິຖານ.
ຍ ຄມພ ໄພ່ພົນຂອງ ພຣະເຈົ້າ.

ໃນ ໄວໆ ນີ້. ຈົ່ງ ເບິ່ງ, [ກ]ຄວາມ ທະນົງ ຕົວ
ຂອງຊົນຊາດນີ້, ຫລື ຜູ້ຄົນຂອງຊາວນີໄຟ
ປະກົດເປັນຄວາມພິນາດຂອງພວກເຂົາ
ຖ້າຫາກພວກເຂົາບໍ່ກັບໃຈ.
28 ຈົ່ງອະທິຖານເພື່ອພວກເຂົາ, ລູກຂອງ
ພໍ່, ເພື່ອການກັບໃຈຈະມາເຖິງພວກເຂົາ.
ແຕ່ຈົ່ງເບິ່ງ, ພໍ່ຢ້ານວ່າ ພຣະວິນຍານເລີກ
[ກ]ຄວາມພະຍາຍາມກັບພວກເຂົາ; ແລະ ຜູ້
ຄົນໃນແຜ່ນດິນສ່ວນນີ້ກຳລັງພະຍາຍາມ
ທຳລາຍອຳນາດ ແລະ ສິດອຳນາດທັງໝົດ
ຊຶ່ງມາຈາກພຣະເຈົ້າ; ແລະ ພວກເຂົາກຳ
ລັງ [ຂ]ປະຕິເສດພຣະວິນຍານບໍລິສຸດ.
29 ແລະ ຫລັງຈາກທີ່ບໍ່ຍອມຮັບເອົາ
ຄວາມຮູ້ອັນຍິ່ງໃຫຍ່ເຊັ່ນນີ້, ລູກຂອງພໍ່,
ພວກເຂົາຈະຕ້ອງຕາຍໃນບໍ່ຊ້ານີ້, ແລ້ວຈະ
ເຮັດໃຫ້ຄຳທຳນາຍຊຶ່ງສາດສະດາທີ່ເວົ້າ
ໄວ້ສຳເລັດ ເຊັ່ນດຽວກັນກັບພຣະຄຳຂອງ
ພຣະຜູ້ຊ່ວຍໃຫ້ລອດເອງຂອງເຮົາ.
30 ລາກ່ອນ, ລູກຂອງພໍ່, ຈົນກວ່າພໍ່
ຈະຂຽນຫາລູກອີກ, ຫລື ຈະພົບລູກອີກ.
ອາແມນ.

---

ສານສະບັບທີສອງຂອງມໍມອນຫາໂມໂຣໄນລູກຊາຍຂອງເພິ່ນ.

*ມີບັນທຶກໄວ້ໃນບົດທີ 9.*

## ບົດທີ 9

*ທັງຊາວເລມັນ ແລະ ຊາວນີໄຟໂຫດຮ້າຍ ແລະ ເສື່ອມຊາມ—ພວກເຂົາທໍລະມານ ແລະ ເຂັ່ນຂ້າຊຶ່ງກັນແລະກັນ—ມໍມອນອະທິຖານຂໍໃຫ້ພຣະຄຸນ ແລະ ພຣະກະລຸນາທິຄຸນຂອງພຣະເຈົ້າຄຸ້ມຄອງໂມໂຣໄນຕະຫລອດການ. ປະມານ ຄ.ສ. 401.*

1 ລູກທີ່ຮັກຂອງພໍ່, ພໍ່ຂຽນເຖິງລູກອີກ
ເພື່ອລູກຈະໄດ້ຮູ້ວ່າພໍ່ຍັງມີຊີວິດຢູ່; ແຕ່ພໍ່ໄດ້
ຂຽນເລື່ອງທີ່ໜ້າໂສກເສົ້າແດ່ເລັກໜ້ອຍ.
2 ເພາະຈົ່ງເບິ່ງ, ພໍ່ໄດ້ທຳການສູ້ຮົບຢ່າງ
ໜັກກັບຊາວເລມັນ, ຊຶ່ງໃນການສູ້ຮົບຄັ້ງ
ນີ້ພວກເຮົາບໍ່ຊະນະພວກເຂົາ; ແລະ ອາ
ຄີອານທັດໄດ້ຖືກຂ້າຕາຍແລ້ວ, ພ້ອມທັງ
ລູຣຳ ແລະ ເອັມຣອນນຳອີກ; ແທ້ຈິງແລ້ວ,
ແລະ ພວກເຮົາໄດ້ສູນເສຍຄົນທີ່ດີໆຂອງ
ພວກເຮົາໄປເປັນຈຳນວນຫລວງຫລາຍ.
3 ແລະ ບັດນີ້ຈົ່ງເບິ່ງ, ລູກຂອງພໍ່, ພໍ່
ຢ້ານວ່າຊາວເລມັນຈະທຳລາຍຜູ້ຄົນພວກ
ນີ້; ເພາະວ່າພວກເຂົາບໍ່ກັບໃຈ, ແລະ
ຊາຕານໄດ້ຍຸຍົງພວກເຂົາໃຫ້ຜິດຖຽງກັນຢູ່
ຕະຫລອດເວລາ.
4 ຈົ່ງເບິ່ງ, ພໍ່ໄດ້ທຳງານກັບພວກເຂົາ
ຕະຫລອດໄປ; ແລະ ເມື່ອພໍ່ເວົ້າກັບພວກ
ເຂົາດ້ວຍພຣະຄຳຂອງພຣະເຈົ້າຢ່າງ [ກ]ຮຸນ
ແຮງ ພວກເຂົາກໍຕົວສັ່ນ ແລະ ຄຽດແຄ້ນ
ໃຫ້ພໍ່; ແລະ ເມື່ອພໍ່ເວົ້າກັບພວກເຂົາດ້ວຍ
ຄຳເວົ້າທີ່ອ່ອນຫວານ ພວກເຂົາກໍເຮັດໃຈ
ແຂງກະດ້າງຕໍ່ມັນ; ດັ່ງນັ້ນ, ພໍ່ຈຶ່ງຢ້ານວ່າ
ພຣະວິນຍານຂອງພຣະຜູ້ເປັນເຈົ້າຈະເລີກ
[ຂ]ພະຍາຍາມກັບພວກເຂົາແລ້ວ.
5 ເພາະພວກເຂົາຄຽດແຄ້ນທີ່ສຸດຈົນ
ພໍ່ຮູ້ສຶກວ່າພວກເຂົາບໍ່ມີຄວາມຢ້ານກົວຕໍ່
ຄວາມຕາຍເລີຍ; ແລະ ພວກເຂົາສູນເສຍ
ຄວາມຮັກຂອງພວກເຂົາທີ່ມີຕໍ່ກັນ; ແລະ

---

27 ກ ຄພ 38:39.
ຄມພ ຈອງຫອງ, ຄວາມຈອງຫອງ.
28 ກ ມມ 5:16.
ຂ ແອວ 39:6.
ຄມພ ບາບທີ່ອະໄພໃຫ້ບໍ່ໄດ້.
**9** 4 ກ 2 ນຟ 1:26–27;
ຄພ 121:41–43.
ຂ ຄພ 1:33.

ພວກເຂົາ [ກ]ກະຫາຍເລືອດ ແລະ ກໍ່ການ
ແກ້ແຄ້ນກັນຢູ່ຕະຫລອດການ.
6 ແລະ ບັດນີ້, ລູກທີ່ຮັກຂອງພໍ່, ເຖິງ
ແມ່ນວ່າພວກເຂົາຈະມີໃຈແຂງກະດ້າງຢູ່
ກໍຕາມ, ຂໍໃຫ້ພວກເຮົາທຳງານ [ກ]ຢ່າງພາກ
ພຽນ; ເພາະຖ້າຫາກພວກເຮົາຢຸດ [ຂ]ທຳ
ງານ, ພວກເຮົາກໍຈະຖືກນຳໄປຢູ່ພາຍໃຕ້
ການກ່າວໂທດ; ເພາະພວກເຮົາມີວຽກງານ
ທີ່ຈະເຮັດເວລາພວກເຮົາຢູ່ໃນຮ່າງກາຍ
ທີ່ເຮັດດ້ວຍດິນໜຽວນີ້, ເພື່ອພວກເຮົາຈະ
ເອົາຊະນະສັດຕູຂອງຄວາມຊອບທຳທັງ
ມວນ, ແລະ ພັກຜ່ອນຈິດວິນຍານຂອງ
ພວກເຮົາໃນອານາຈັກຂອງພຣະເຈົ້າ.
7 ແລະ ບັດນີ້ພໍ່ຈະຂຽນບາງຢ່າງກ່ຽວ
ກັບຄວາມທຸກທໍລະມານຂອງຜູ້ຄົນພວກນີ້.
ເພາະຕາມທີ່ພໍ່ໄດ້ຍິນມາຈາກອາໂມຣອນ,
ຈົ່ງເບິ່ງ, ຊາວເລມັນມີຊະເລີຍເສິກຢ່າງ
ຫລວງຫລາຍທີ່ເປັນຜູ້ຊາຍ, ຜູ້ຍິງ, ແລະ
ເດັກນ້ອຍ, ຊຶ່ງພວກເຂົາໄດ້ມາຈາກຫໍສູງ
ເຊີໄຣຊາ.
8 ແລະ ພວກເຂົາໄດ້ຂ້າຜົວ ແລະ ພໍ່ຂອງ
ພວກແມ່ຍິງ ແລະ ເດັກນ້ອຍເຫລົ່ານັ້ນ;
ແລະ ພວກເຂົາໃຫ້ແມ່ຍິງກິນເນື້ອໜັງຜົວ
ຂອງຕົນ, ແລະ ໃຫ້ເດັກນ້ອຍກິນເນື້ອໜັງພໍ່
ຂອງຕົນ; ແລະ ບໍ່ເອົານ້ຳໃຫ້ພວກເຂົາດື່ມ,
ຖ້າໃຫ້ດື່ມ ກໍພຽງເລັກໜ້ອຍເທົ່ານັ້ນ.
9 ແລະ ເຖິງແມ່ນວ່າຊາວເລມັນຈະກະ
ທຳສິ່ງທີ່ເປັນໜ້າກຽດຊັງອັນໃຫຍ່ຫລວງ
ນີ້, ແຕ່ມັນກໍຍັງບໍ່ຮ້າຍແຮງໄປກວ່າຜູ້ຄົນ
ຂອງພວກເຮົາຜູ້ຢູ່ໃນເມືອງໂມຣິອານທຳ
ເລີຍ. ເພາະຈົ່ງເບິ່ງ, ພວກເຂົາໄດ້ເອົາລູກ
ສາວຂອງຊາວເລມັນຫລາຍຄົນມາເປັນຊະ
ເລີຍ; ແລະ ຫລັງຈາກເອົາສິ່ງອັນເປັນທີ່ຮັກ
ແລະ ມີຄ່າທີ່ສຸດເໜືອກວ່າທຸກສິ່ງໄປຈາກ
ພວກນາງແລ້ວ, ຊຶ່ງຄື [ກ]ພົມມະຈັນ ແລະ
[ຂ]ຄວາມບໍລິສຸດ—
10 ແລະ ຫລັງຈາກພວກເຂົາກະທຳສິ່ງນີ້
ແລ້ວ, ພວກເຂົາໄດ້ຂ້າພວກນາງດ້ວຍວິທີ
ການທີ່ປ່າເຖື່ອນທີ່ສຸດ, ໂດຍທໍລະມານຮ່າງ
ກາຍຂອງພວກນາງຈົນເຖິງແກ່ຄວາມຕາຍ;
ແລະ ຫລັງຈາກເຮັດການນີ້ແລ້ວ, ພວກເຂົາ
ກໍກິນເນື້ອໜັງຂອງພວກນາງເໝືອນກັບສັດ
ປ່າ, ເພາະວ່າຄວາມແຂງກະດ້າງຂອງໃຈ
ຂອງພວກເຂົາ; ແລະ ພວກເຂົາເຮັດໄປເພື່ອ
ເປັນເຄື່ອງໝາຍຂອງຄວາມກ້າຫານ.
11 ໂອ້ ລູກທີ່ຮັກຂອງພໍ່, ເປັນໄປໄດ້ແນວ
ໃດທີ່ຜູ້ຄົນເຫລົ່ານີ້ປາດສະຈາກຄວາມສີວິ
ໄລ—
12 (ແລະ ພຽງ ສອງ ສາມ ປີ ຜ່ານ ມາ ນີ້
ພວກເຂົາຍັງເປັນຄົນທີ່ສຸພາບ ແລະ ໜ້າ
ຊົມຢູ່)
13 ແຕ່ວ່າ ໂອ້ ລູກຂອງພໍ່, ເປັນໄປໄດ້
ແນວໃດທີ່ຜູ້ຄົນເຫລົ່ານີ້ມີຄວາມເບີກບານ
ຢູ່ກັບຄວາມໜ້າກຽດຊັງເຖິງຂະໜາດນີ້—
14 ພວກເຮົາຈະຫວັງໄດ້ແນວໃດວ່າ
ພຣະເຈົ້າຈະ [ກ]ຢັບຢັ້ງພຣະຫັດໃນການພິ
ພາກສາລົງໂທດພວກເຮົາ?
15 ຈົ່ງເບິ່ງ, ໃຈຂອງພໍ່ຮ້ອງຂຶ້ນວ່າ: ວິບັດ
ແກ່ຜູ້ຄົນພວກນີ້. ຂໍຈົ່ງໂປດອອກມາໃນ
ການພິພາກສາເຖີດ, ໂອ້ ພຣະອົງເຈົ້າ, ຂໍ
ຈົ່ງເຊື່ອງບາບ, ແລະ ຄວາມຊົ່ວຮ້າຍ, ແລະ
ຄວາມໜ້າກຽດຊັງຂອງພວກເຂົາໃຫ້ພົ້ນ
ຈາກພຣະພັກຂອງພຣະອົງເຖີດ!
16 ແລະ ອີກຢ່າງໜຶ່ງ, ລູກຂອງພໍ່, ມີ
[ກ]ແມ່ໝ້າຍຫລາຍຄົນກັບລູກສາວຂອງ
ພວກເຂົາທີ່ຍັງຢູ່ໃນເມືອງເຊີໄຣຊາ; ແລະ

5 ກ ມມ 4:11–12.
6 ກ ຄມພ ພາກພຽນ, ຄວາມພາກພຽນ.
ຂ ຢຄ 1:19; ອນ 1:20. ຄມພ ໜ້າທີ່.
9 ກ ຄມພ ພົມມະຈັນ.
ຂ ຄມພ ຄຸນນະທຳ.
14 ກ ແອວ 10:23.
16 ກ ຄມພ ແມ່ໝ້າຍ.

ສະ ບຽງ ອາຫານ ສ່ວນ ທີ່ ຊາວ ເລມັນ ບໍ່ ໄດ້
ເອົາໄປນຳ, ຈົ່ງເບິ່ງ, ກອງທັບຂອງຊີເນໄຟ
ໄດ້ເກັບເອົາໄປໝົດ, ແລະ ປະຖິ້ມໃຫ້ພວກ
ເຂົາຊັດເຊພະເນຈອນໄປທຸກແຫ່ງຫົນເພື່ອ
ຊອກຫາອາຫານ; ແລະ ຍິງຊະລາຫລາຍ
ຄົນໄດ້ເປັນລົມຕາມທາງ ແລະ ຕາຍໄປ.
17 ແລະ ກອງທັບຊຶ່ງຢູ່ກັບພໍ່ກໍອ່ອນກຳ
ລັງ; ແລະ ກອງທັບຂອງຊາວເລມັນນັ້ນ
ຢູ່ລະຫວ່າງເຊີໄຣຊາກັບພໍ່; ແລະ ມີຜູ້ຍິງ
ຫລາຍຕໍ່ຫລາຍຄົນໜີໄປຫາກອງທັບຂອງ
[ກ]ອາໂຣນ ແລ້ວກໍຕົກເປັນຜູ້ຮັບເຄາະຂອງ
ຄວາມປ່າເຖື່ອນອັນເປັນຕາຢ້ານຂອງ
ພວກເຂົາ.
18 ໂອ້ ຜູ້ຄົນຂອງພໍ່ຊ່າງມາຊົ່ວຮ້າຍແທ້
ນໍ! ພວກເຂົາບໍ່ມີລະບຽບ ແລະ ບໍ່ມີຄວາມ
ເມດຕາເລີຍ. ຈົ່ງເບິ່ງ, ພໍ່ເປັນພຽງແຕ່ມະນຸດ
ເທົ່ານັ້ນ, ແລະ ພໍ່ມີແຕ່ກຳລັງຂອງມະນຸດ,
ແລະ ພໍ່ບໍ່ສາມາດບັງຄັບໃຫ້ພວກເຂົາປະຕິ
ບັດຕາມຄຳສັ່ງຂອງພໍ່ໄດ້ອີກຕໍ່ໄປ.
19 ແລະ ພວກເຂົາກັບມາເຂັ້ມແຂງໃນ
ຄວາມຊົ່ວຊ້າຂອງພວກເຂົາ; ແລະ ພວກ
ເຂົາປ່າເຖື່ອນໂດຍບໍ່ຍົກເວັ້ນຜູ້ໃດ; ບໍ່ວ່າ
ໜຸ່ມ ຫລື ແກ່; ແລະ ພວກເຂົາເບີກບານ
ກັບທຸກສິ່ງທຸກຢ່າງນອກຈາກສິ່ງທີ່ດີ; ແລະ
ຄວາມທຸກທໍລະມານຂອງພວກແມ່ຍິງ
ແລະ ເດັກນ້ອຍຂອງພວກເຂົາທົ່ວພື້ນແຜ່ນ
ດິນນີ້ມີຫລາຍກວ່າທຸກສິ່ງ; ແທ້ຈິງແລ້ວ,
ລີ້ນບອກບໍ່ໄດ້, ທັງຂຽນໄວ້ກໍບໍ່ໄດ້.
20 ແລະ ບັດນີ້, ລູກຂອງພໍ່, ພໍ່ຈະບໍ່ເວົ້າ
ເຖິງສະພາບທີ່ໜ້າຢ້ານກົວນີ້ອີກຕໍ່ໄປ. ຈົ່ງ
ເບິ່ງ, ລູກຮູ້ຈັກແລ້ວເຖິງຄວາມຊົ່ວຮ້າຍຂອງ
ຜູ້ຄົນພວກນີ້; ລູກຮູ້ວ່າພວກເຂົາຢູ່ໂດຍ
ປາດສະຈາກຫລັກການ, ແລະ ປາດສະ
ຈາກຄວາມຮູ້ສຶກ; ແລະ ຄວາມຊົ່ວຮ້າຍຂອງ
ພວກເຂົານັ້ນ [ກ]ຮ້າຍແຮງກວ່າຊາວເລມັນ.
21 ຈົ່ງເບິ່ງ, ລູກຂອງພໍ່, ພໍ່ບໍ່ສາມາດ
ອ້ອນວອນຫາພຣະເຈົ້າເພື່ອພວກເຂົາ
ເພາະພໍ່ຢ້ານວ່າພຣະອົງຈະລົງໂທດພໍ່.
22 ແຕ່ຈົ່ງເບິ່ງ, ລູກຂອງພໍ່, ພໍ່ໄດ້ອ້ອນ
ວອນຫາພຣະເຈົ້າເພື່ອລູກ, ແລະ ພໍ່ໄວ້ວາງ
ໃຈໃນພຣະຄຣິດວ່າ ລູກຈະລອດ; ແລະ ພໍ່
ອະທິຖານຫາພຣະເຈົ້າເພື່ອພຣະອົງຈະ
[ກ]ໄວ້ຊີວິດຂອງລູກ, ເພື່ອເບິ່ງຜູ້ຄົນຂອງພຣະ
ອົງກັບມາຫາພຣະອົງ, ຫລື ໄປຫາຄວາມ
ພິນາດທັງສິ້ນຂອງພວກເຂົາ; ເພາະພໍ່ຮູ້ວ່າ
ພວກເຂົາຈະຕ້ອງຕາຍ ຖ້າຫາກພວກເຂົາບໍ່
[ຂ]ກັບໃຈ ແລະ ກັບມາຫາພຣະອົງ.
23 ແລະ ຖ້າຫາກພວກເຂົາຕາຍໄປ ມັນ
ຈະເປັນເໝືອນດັ່ງຊາວຢາເຣັດ, ເພາະ
ຄວາມຈິງໃຈຂອງພວກເຂົາໃນ [ກ]ການ
ສະແຫວງຫາເລືອດ ແລະ [ຂ]ການແກ້ແຄ້ນ.
24 ແລະ ຖ້າຫາກເປັນໄປວ່າພວກເຂົາ
ຕາຍໄປ, ພວກເຮົາກໍຮູ້ວ່າ ພີ່ນ້ອງຂອງພວກ
ເຮົາເປັນຈຳນວນຫລວງຫລາຍໄດ້ [ກ]ແຕກ
ໄປຫາຊາວເລມັນ, ແລະ ຜູ້ຄົນເປັນຈຳນວນ
ຫລວງຫລາຍຕື່ມອີກທີ່ຈະແຕກໄປຫາພວກ
ເຂົາ; ດັ່ງນັ້ນ ຈົ່ງຂຽນໄວ້ແດ່ບາງເລື່ອງຖ້າ
ຫາກລູກໄດ້ຮັບການຍົກເວັ້ນ ແລະ ພໍ່ຈະ
ຕາຍໄປ ແລະ ບໍ່ເຫັນລູກ; ແຕ່ພໍ່ວາງໃຈວ່າ
ພໍ່ຈະໄດ້ເຫັນລູກໃນບໍ່ຊ້ານີ້; ເພາະພໍ່ມີບັນ
ທຶກສັກສິດທີ່ຢາກ [ຂ]ມອບໃຫ້ລູກ.
25 ລູກຂອງພໍ່, ຈົ່ງຊື່ສັດໃນພຣະຄຣິດ;
ແລະ ຢ່າໃຫ້ເລື່ອງຊຶ່ງພໍ່ຂຽນມານີ້ເຮັດໃຫ້
ລູກໂສກເສົ້າ, ທີ່ຈະທ່ວງດຶງລູກລົງໄປຫາ

17 *ກ* ມມ 2:9.
20 *ກ* ຣລມ 6:34–35.
22 *ກ* ມມ 8:3.
*ຂ* ມລກ 3:7;
ຣລມ 13:11;
3 ນຟ 10:6; 24:7.
23 *ກ* ມມ 4:11–12.
*ຂ* ອທ 15:15–31.
24 *ກ* ແອວ 45:14.
*ຂ* ມມ 6:6.

ຄວາມ ຕາຍ, ແຕ່ ຂໍ ໃຫ້ ພຣະ ຄຣິດ ຈົ່ງ ຍົກ
ລູກຂຶ້ນ, ແລະ ຂໍໃຫ້ [ກ]ຄວາມທຸກທໍລະມານ
ແລະ ການສິ້ນພຣະຊົນຂອງພຣະອົງ, ແລະ
ການປະກົດຕົວຕໍ່ບັນພະບຸລຸດຂອງພວກ
ເຮົາ, ແລະ ພຣະເມດຕາ ແລະ ຄວາມອົດ
ກັ້ນ ຂອງ ພຣະ ອົງ, ແລະ ຄວາມຫວັງ ໃນ
ລັດສະໝີພາບຂອງພຣະອົງ ແລະ [ຂ]ຊີວິດ
ນິລັນດອນ ຈົ່ງ ມີຢູ່ ໃນ [ຄ]ຈິດໃຈຂອງລູກ
ຕະຫລອດການດ້ວຍເທີ້ນ.

26 ແລະ ຂໍໃຫ້ພຣະຄຸນຂອງພຣະເຈົ້າອົງ
ເປັນພຣະບິດາ, ຊຶ່ງພຣະທີ່ນັ່ງຂອງພຣະອົງ
ຢູ່ສູງໃນຟ້າສະຫວັນ, ແລະ ອົງພຣະເຢຊູ
ຄຣິດເຈົ້າຂອງພວກເຮົາ, ຜູ້ປະທັບຢູ່ທາງ
[ກ]ເບື້ອງຂວາພຣະຫັດແຫ່ງອຳນາດຂອງ
ພຣະອົງ, ຈົນກວ່າທຸກສິ່ງທຸກຢ່າງຈະຂຶ້ນຢູ່
ກັບພຣະອົງ, ຈົ່ງຢູ່ ແລະ ສະຖິດຢູ່ກັບລູກ
ຕະຫລອດການດ້ວຍເທີ້ນ. ອາແມນ.

## ບົດທີ 10

*ປະຈັກພະຍານເຖິງພຣະຄຳພີມໍມອນມາໂດຍອຳນາດຂອງພຣະວິນຍານບໍລິສຸດ—ຂອງປະທານແຫ່ງພຣະວິນຍານຖືກແຈກຈ່າຍ ໃຫ້ ແກ່ຜູ້ ທີ່ຊື່ ສັດ—ຂອງ ປະທານແຫ່ງ ພຣະ ວິນຍານ ຄຽງ ຄູ່ ກັນ ໄປ ກັບສັດທາ—ຄຳເວົ້າຂອງໂມໂຣໄນກ່າວຂຶ້ນມາຈາກພື້ນດິນ—ຈົ່ງມາຫາພຣະຄຣິດ, ເປັນຄົນດີພ້ອມໃນພຣະອົງ, ແລະ ເຮັດໃຫ້ຈິດວິນຍານຂອງທ່ານບໍລິສຸດ. ປະມານ ຄ.ສ. 421.*

1 ບັດນີ້ຂ້າພະເຈົ້າໂມໂຣໄນຂຽນເລື່ອງທີ່
ຂ້າພະເຈົ້າເຫັນວ່າດີໄວ້ແດ່; ແລະ ຂ້າພະ
ເຈົ້າຂຽນເຖິງ [ກ]ຊາວເລມັນ, ພີ່ນ້ອງຂອງຂ້າ
ພະເຈົ້າ; ແລະ ຂ້າພະເຈົ້າຢາກໃຫ້ພວກ
ເຂົາຮູ້ວ່າ ຫລາຍກວ່າສີ່ຮ້ອຍຊາວປີຜ່ານ
ໄປແລ້ວ ນັບແຕ່ໄດ້ຮັບເຄື່ອງໝາຍຂອງ
ການສະເດັດມາຂອງພຣະຄຣິດ.

2 ແລະ ຂ້າພະເຈົ້າ [ກ]ຜະນຶກບັນທຶກນີ້ໄວ້,
ຫລັງຈາກທີ່ຂ້າພະເຈົ້າໄດ້ເວົ້າກັບທ່ານຈັກ
ສອງສາມຄຳເປັນການແນະນຳທ່ານ.

3 ຈົ່ງເບິ່ງ, ຂ້າພະເຈົ້າຂໍແນະນຳທ່ານວ່າ
ເມື່ອທ່ານອ່ານເລື່ອງເຫລົ່ານີ້ ຖ້າມັນເປັນ
ຄວາມສະຫລຽວສະຫລາດຂອງພຣະເຈົ້າ
ວ່າທ່ານຄວນອ່ານມັນ, ໃຫ້ທ່ານຈື່ຈຳໄວ້ວ່າ
ພຣະຜູ້ເປັນເຈົ້າເມດຕາລູກຫລານມະນຸດ
ຫລາຍພຽງໃດ, ຕັ້ງແຕ່ການສ້າງອາດາມ
ລົງມາຈົນເຖິງເວລາທີ່ທ່ານໄດ້ຮັບເລື່ອງ
ເຫລົ່ານີ້, ແລະ [ກ]ໄຕ່ຕອງເລື່ອງນີ້ຢູ່ໃນ [ຂ]ໃຈ
ທ່ານ.

4 ແລະ ເມື່ອທ່ານໄດ້ຮັບເລື່ອງເຫລົ່ານີ້
ແລ້ວ, ຂ້າພະເຈົ້າຂໍແນະນຳທ່ານໃຫ້ [ກ]ທູນ
ຖາມພຣະເຈົ້າ, ພຣະບິດາຜູ້ສະຖິດນິລັນ
ດອນ ໃນພຣະນາມຂອງພຣະຄຣິດ, ຖ້າ
ຫາກເລື່ອງເຫລົ່ານີ້ [ຂ]ບໍ່ຈິງ; ແລະ ຖ້າຫາກ
ທ່ານທູນຖາມດ້ວຍ [ຄ]ໃຈຈິງ, ດ້ວຍເຈດຕະ
ນາ [ງ]ອັນແທ້ຈິງ, ໂດຍມີ [ຈ]ສັດທາໃນພຣະ
ຄຣິດ, ພຣະອົງຈະ [ສ]ສະແດງ [ຊ]ຄວາມຈິງ
ຂອງເລື່ອງນີ້ໃຫ້ປະຈັກແກ່ທ່ານ, ໂດຍ
ອຳນາດຂອງພຣະວິນຍານບໍລິສຸດ.

---

25 *ກ* ຄມພ ຊົດໃຊ້, ການຊົດໃຊ້.
*ຂ* ຄມພ ຊີວິດນິລັນດອນ.
*ຄ* ຄມພ ຈິດໃຈ.
26 *ກ* ລກ 22:69; ກຈກ 7:55–56; ມຊຢ 5:9; ແອວ 28:12.
**10** 1 *ກ* ຄພ 10:48.
2 *ກ* ມມ 8:4, 13–14. ຄມພ ພຣະຄຳພີ—ພຣະຄຳພີທີ່ໄດ້ທຳນາຍໄວ້ຈະອອກມາ.
3 *ກ* ພບຍ 11:18–19. ຄມພ ໄຕ່ຕອງ.
*ຂ* ພບຍ 6:6–7.
4 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* 1 ນຟ 13:39; 14:30; ມຊຢ 1:6; ອທ 4:10–11; 5:3.
*ຄ* ຄມພ ຊື່ສັດ, ຄວາມຊື່ສັດ.
*ງ* ຢກບ 1:5–7; ມຣນ 7:9.
*ຈ* ຄມພ ສັດທາ.
*ສ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຊ* ຄມພ ຈິງ, ຄວາມຈິງ.

5 ແລະ ໂດຍອຳນາດຂອງພຣະວິນຍານ
ບໍລິສຸດ ທ່ານຈະ [ກ]ຮູ້ຈັກ [ຂ]ຄວາມ ຈິງຂອງ
ທຸກເລື່ອງ.

6 ແລະ ສິ່ງໃດກໍຕາມທີ່ດີຍ່ອມທ່ຽງທຳ
ແລະ ເປັນຈິງ; ດັ່ງນັ້ນ, ບໍ່ມີສິ່ງໃດທີ່ດີຈະປະ
ຕິເສດພຣະຄຣິດ, ແຕ່ຮັບວ່າພຣະອົງເປັນຢູ່.

7 ແລະ ທ່ານຈະຮູ້ວ່າພຣະອົງເປັນຢູ່,
ໂດຍອຳນາດຂອງພຣະວິນຍານບໍລິສຸດ;
ດັ່ງນັ້ນ ຂ້າພະເຈົ້າຂໍແນະນຳທ່ານບໍ່ໃຫ້ປະ
ຕິເສດອຳນາດຂອງພຣະເຈົ້າ; ເພາະພຣະ
ອົງທຳງານດ້ວຍອຳນາດ [ກ]ຕາມສັດທາ
ຂອງລູກຫລານມະນຸດ, ເຊັ່ນດຽວກັບມື້ນີ້
ແລະ ມື້ອື່ນ, ແລະ ຕະຫລອດການ.

8 ແລະ ອີກ ຢ່າງ ໜຶ່ງ, ຂ້າພະເຈົ້າຂໍ
ແນະນຳທ່ານ, ພີ່ນ້ອງຂອງຂ້າພະເຈົ້າ, ບໍ່
ໃຫ້ປະຕິເສດຂອງ [ກ]ປະທານຂອງພຣະ
ເຈົ້າ, ເພາະມັນມີຢູ່ຢ່າງຫລວງຫລາຍ; ແລະ
ມັນມາຈາກພຣະເຈົ້າອົງດຽວກັນ. ແລະ ມີວິ
ທີ [ຂ]ຕ່າງໆທີ່ຈະໃຫ້ຂອງປະທານເຫລົ່ານີ້;
ແຕ່ເປັນພຣະເຈົ້າອົງດຽວກັນທີ່ທຳງານທັງ
ໝົດທຸກຢ່າງ; ແລະ ປະທານຂອງເຫລົ່ານີ້
ໃຫ້ມະນຸດໂດຍການສະແດງພຣະວິນຍານ
ຂອງພຣະເຈົ້າໃຫ້ປະຈັກແກ່ມະນຸດ, ເພື່ອ
ເປັນປະໂຫຍດແກ່ພວກເຂົາ.

9 ເພາະຈົ່ງເບິ່ງ, ປະທານ [ກ]ໃຫ້ຄົນໜຶ່ງ
ໂດຍພຣະວິນຍານຂອງພຣະເຈົ້າ ເພື່ອເຂົາ
ຈະ [ຂ]ສິດສອນຄຳແຫ່ງປັນຍາ;

10 ແລະ ໃຫ້ອີກຄົນໜຶ່ງ ເພື່ອເຂົາຈະສິດ
ສອນຄຳແຫ່ງຄວາມຮູ້ໂດຍພຣະວິນຍານ
ດຽວກັນ;

11 ແລະ ໃຫ້ ອີກ ຄົນ ໜຶ່ງ ມີ [ກ]ສັດທາ
ອັນໃຫຍ່ຍິ່ງ; ແລະ ໃຫ້ອີກຄົນໜຶ່ງ, ຂອງ
ປະທານແຫ່ງ [ຂ]ການປິ່ນປົວໂດຍພຣະວິນ
ຍານດຽວກັນ;

12 ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ເພື່ອ
ເຂົາຈະເຮັດ [ກ]ສິ່ງມະຫັດສະຈັນອັນຍິ່ງໃຫຍ່;

13 ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ເພື່ອ
ເຂົາຈະທຳນາຍກ່ຽວກັບທຸກສິ່ງ;

14 ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ການ
ເຫັນທູດ ແລະ ວິນຍານທີ່ປະຕິບັດສາດສະ
ໜາກິດ;

15 ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ພາສາ
ທຸກພາສາ;

16 ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ການ
ແປຄວາມໝາຍຂອງພາສາ ແລະ [ກ]ພາສາ
ຕ່າງໆ.

17 ແລະ ຂອງປະທານທັງໝົດນີ້ມາໂດຍ
ພຣະວິນຍານຂອງພຣະຄຣິດ; ແລະ ມັນ
ມາສູ່ທຸກຄົນໄດ້ຕ່າງໆກັນຕາມທີ່ພຣະອົງພໍ
ພຣະໄທ.

18 ແລະ ຂ້າພະເຈົ້າຂໍແນະນຳທ່ານ, ພີ່
ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ໃຫ້ທ່ານ
ຈຳໄວ້ວ່າຂອງປະທານທີ່ດີ [ກ]ທຸກຢ່າງມາ
ຈາກພຣະຄຣິດ.

19 ແລະ ຂ້າພະເຈົ້າຂໍແນະນຳທ່ານ, ພີ່
ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ໃຫ້ທ່ານ
ຈຳໄວ້ວ່າ ພຣະອົງເປັນ [ກ]ເໝືອນກັນເຊັ່ນມື້
ວານນີ້, ມື້ນີ້, ແລະ ຕະຫລອດການ, ແລະ
ວ່າຂອງປະທານຊຶ່ງຂ້າພະເຈົ້າເວົ້າມາທັງ
ໝົດນີ້, ຊຶ່ງເປັນທາງວິນຍານຈະບໍ່ໝົດໄປ

5 *ກ* ຄພ 35:19.
ຄມພ ການສາມາດສັງເກດ,
ຂອງປະທານແຫ່ງ;
ປະຈັກພະຍານ.
*ຂ* ຢຣ 8:32.
7 *ກ* 1 ນຟ 10:17–19.
8 *ກ* ຄມພ ຂອງປະທານ
ແຫ່ງພຣະວິນຍານ.
*ຂ* ຄພ 46:15.
9 *ກ* 1 ກຣທ 12:8–11;
ຄພ 46:8–29.
*ຂ* ຄພ 88:77–79, 118.
11 *ກ* ຄມພ ສັດທາ.
*ຂ* ຄມພ ປິ່ນປົວ, ການປິ່ນປົວ.
12 *ກ* ຄມພ ມະຫັດສະຈັນ,
ການມະຫັດສະຈັນ.
16 *ກ* ຄມພ ການເວົ້າພາສາ,
ຂອງປະທານແຫ່ງ.
18 *ກ* ຢກບ 1:17.
19 *ກ* ຮຮ 13:8.

ຈັກເທື່ອ, ຕາບໃດທີ່ໂລກຍັງຕັ້ງຢູ່, ນອກຈາກຈະເປັນໄປຕາມ [ຂ]ຄວາມບໍ່ເຊື່ອຖືຂອງລູກຫລານມະນຸດເທົ່ານັ້ນ.

20 ດັ່ງນັ້ນ, ຈຶ່ງຕ້ອງມີ [ກ]ສັດທາ; ແລະ ຖ້າຫາກມີສັດທາກໍຕ້ອງມີຄວາມຫວັງເໝືອນກັນ; ແລະ ຖ້າຫາກມີຄວາມຫວັງກໍຕ້ອງມີຄວາມໃຈບຸນເໝືອນກັນ.

21 ແລະ ຖ້າຫາກທ່ານບໍ່ມີ [ກ]ຄວາມໃຈບຸນ ທ່ານຈະບໍ່ມີທາງລອດຢູ່ໃນອານາຈັກຂອງພຣະເຈົ້າ; ທັງທ່ານຈະລອດຢູ່ໃນອານາຈັກຂອງພຣະເຈົ້າບໍ່ໄດ້ຖ້າຫາກທ່ານບໍ່ມີສັດທາ; ທັງທ່ານຈະລອດບໍ່ໄດ້ຖ້າຫາກທ່ານບໍ່ມີຄວາມຫວັງ.

22 ແລະ ຖ້າຫາກທ່ານບໍ່ມີຄວາມຫວັງທ່ານກໍຈຳຕ້ອງຢູ່ໃນຄວາມໝົດຫວັງ; ແລະ ຄວາມໝົດຫວັງມາເຖິງເພາະຄວາມຊົ່ວຮ້າຍ.

23 ແລະ ພຣະຄຣິດໄດ້ກ່າວກັບບັນພະບຸລຸດຂອງພວກເຮົາໄວ້ແທ້ໆວ່າ: [ກ]ຖ້າຫາກເຈົ້າມີສັດທາ ເຈົ້າຈະສາມາດເຮັດທຸກສິ່ງທີ່ເຮົາເຫັນວ່າສົມຄວນ.

24 ແລະ ບັດນີ້ຂ້າພະເຈົ້າຂໍເວົ້າກັບທີ່ສຸດຂອງແຜ່ນດິນໂລກ—ວ່າຖ້າຫາກມື້ນັ້ນມາເຖິງ ຊຶ່ງອຳນາດ ແລະ ຂອງປະທານຂອງພຣະເຈົ້າໝົດໄປໃນບັນດາພວກທ່ານ, ມັນກໍຈະເປັນ [ກ]ເພາະ [ຂ]ຄວາມບໍ່ເຊື່ອຖື.

25 ແລະ ວິບັດແກ່ລູກຫລານມະນຸດຖ້າຫາກມັນເປັນໄປເຊັ່ນນີ້; ເພາະວ່າຈະ [ກ]ບໍ່ມີຜູ້ໃດເລີຍທີ່ເຮັດຄວາມດີໃນບັນດາພວກທ່ານ, ບໍ່ມີຈັກຄົນເລີຍ. ເພາະຖ້າຫາກເຖິງແມ່ນແຕ່ຄົນດຽວໃນບັນດາພວກທ່ານເຮັດຄວາມດີ, ເຂົາຄົນນັ້ນຈະທຳງານດ້ວຍອຳນາດ ແລະ ຂອງປະທານຂອງພຣະເຈົ້າ.

26 ແລະ ວິບັດແກ່ຄົນທີ່ຈະເຮັດໃຫ້ສິ່ງເຫລົ່ານີ້ໝົດສິ້ນ ແລະ ຕາຍ, ເພາະເຂົາຍ່ອມ [ກ]ຕາຍຢູ່ໃນ [ຂ]ບາບຂອງເຂົາ, ແລະ ເຂົາຈະລອດຢູ່ໃນອານາຈັກຂອງພຣະເຈົ້າບໍ່ໄດ້; ແລະ ຂ້າພະເຈົ້າເວົ້າເລື່ອງນີ້ຕາມພຣະຄຳຂອງພຣະຄຣິດ; ແລະ ຂ້າພະເຈົ້າບໍ່ໄດ້ເວົ້າຕົວະ.

27 ແລະ ຂ້າພະເຈົ້າຂໍແນະນຳທ່ານໃຫ້ຈົດຈຳເລື່ອງເຫລົ່ານີ້; ເພາະເວລາຈະມາໂດຍໄວທີ່ທ່ານຈະຮູ້ວ່າ ຂ້າພະເຈົ້າບໍ່ໄດ້ເວົ້າຕົວະ, ເພາະທ່ານຈະເຫັນຂ້າພະເຈົ້າຢູ່ທີ່ບ່ອນພິພາກສາຂອງພຣະເຈົ້າ; ແລະ ອົງພຣະຜູ້ເປັນເຈົ້າຈະກ່າວກັບທ່ານວ່າ: ເຮົາບໍ່ໄດ້ປະກາດ [ກ]ຄຳຂອງເຮົາແກ່ເຈົ້າບໍ? ຊຶ່ງຊາຍຄົນນີ້ຂຽນໄວ້, ເໝືອນຄົນຕາຍ [ຂ]ຮ້ອງຂຶ້ນມາຈາກຄວາມຕາຍ, ແທ້ຈິງແລ້ວ, ແມ່ນດັ່ງຄົນຕາຍເວົ້າອອກມາຈາກ [ຄ]ຝຸ່ນດິນ?

28 ຂ້າພະເຈົ້າປະກາດເລື່ອງເຫລົ່ານີ້ເພື່ອໃຫ້ຄຳທຳນາຍສຳເລັດ. ແລະ ຈົ່ງເບິ່ງ, ມັນຈະອອກຈາກພຣະໂອດຂອງພຣະເຈົ້າຜູ້ເປັນນິດ; ແລະ ພຣະຄຳຂອງພຣະອົງຈະ [ກ]ອອກຈາກລຸ້ນສູ່ລຸ້ນ.

29 ແລະ ພຣະເຈົ້າຈະສະແດງແກ່ທ່ານ, ວ່າເລື່ອງຊຶ່ງຂ້າພະເຈົ້າຂຽນໄວ້ນັ້ນເປັນຄວາມຈິງ.

---

19 *ຂ* ມຣນ 7:37.
20 *ກ* ອທ 12:3–37.
21 *ກ* 1 ກຣທ 13; ມຣນ 7:1, 42–48. ຄມພ ໃຈບຸນ, ຄວາມໃຈບຸນ.
23 *ກ* ມຣນ 7:33.
24 *ກ* ມຣນ 7:37.
*ຂ* ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
25 *ກ* ປຈສ ພສສ 14:1–7 (ພາກທ້ອຍທ້າຍ); ຣມ 3:10–12.
26 *ກ* ອຊກ 18:26–27; 1 ນຟ 15:32–33; ມຊຢ 15:26.
*ຂ* ຢຣ 8:21.
27 *ກ* 2 ນຟ 33:10–11.
*ຂ* 2 ນຟ 3:19–20; 27:13; 33:13; ມມ 9:30.
*ຄ* ອຊຢ 29:4.
28 *ກ* 2 ນຟ 29:2.

30 ແລະ ອີກ ຢ່າງ ໜຶ່ງ ຂ້າ ພະ ເຈົ້າ ຂໍ
ແນະນຳທ່ານໃຫ້ [ກ]ມາຫາພຣະຄຣິດ, ແລະ
ຍຶດຖືຂອງປະທານທີ່ດີໄວ້ທຸກຢ່າງ, ແລະ
[ຂ]ບໍ່ແຕະຕ້ອງຂອງຊົ່ວ ຫລື ສິ່ງທີ່ບໍ່ສະອາດ.
31 ແລະ ຈົ່ງ [ກ]ຕື່ນ, ແລະ ລຸກຂຶ້ນເຖີດ, ໂອ້
ເຢຣູຊາເລັມ; ແທ້ຈິງແລ້ວ, ຈົ່ງສວມອາພອນ
ສວຍງາມເຖີດ, ໂອ້ ທິດາຂອງ [ຂ]ຊີໂອນ;
ແລະ ຈົ່ງເຮັດໃຫ້ [ຄ]ຫລັກຂອງທ່ານ [ງ]ແຂງ
ແຮງ ແລະ ຂະຫຍາຍເຂດຂອງທ່ານ
ຕະຫລອດການ, ເພື່ອທ່ານຈະ [ຈ]ບໍ່ສັບສົນ
ອີກຕໍ່ໄປ, ເພື່ອພັນທະສັນຍາຂອງພຣະບິດາ
ຜູ້ສະຖິດນິລັນດອນ ຊຶ່ງໄດ້ເຮັດໄວ້ກັບທ່ານ
ຈະສຳເລັດ, ໂອ້ ເຊື້ອສາຍອິດສະຣາເອນ.
32 ແທ້ຈິງແລ້ວ, ຈົ່ງ [ກ]ມາຫາພຣະຄຣິດ,
ແລະ ຖືກເຮັດໃຫ້ເປັນ [ຂ]ຄົນດີພ້ອມໃນ
ພຣະອົງ, ແລະ ປະຕິເສດຕົນຈາກຄວາມ
ບໍ່ເປັນເໝືອນດັ່ງພຣະເຈົ້າທຸກຢ່າງ; ແລະ
ຖ້າຫາກທ່ານປະຕິເສດຕົນຈາກຄວາມບໍ່
ເປັນເໝືອນດັ່ງພຣະເຈົ້າທຸກຢ່າງ, ແລະ
[ຄ]ຮັກພຣະເຈົ້າດ້ວຍສຸດພະລັງ, ຄວາມນຶກ
ຄິດ, ແລະ ກຳລັງຂອງທ່ານ, ເມື່ອນັ້ນພຣະ
ຄຸນຂອງພຣະອົງຈຶ່ງພຽງພໍສຳລັບທ່ານ,
ເພື່ອໂດຍພຣະຄຸນຂອງພຣະອົງ, ທ່ານຈະ
ດີພ້ອມໃນພຣະຄຣິດ; ແລະ ຖ້າຫາກໂດຍ
[ງ]ພຣະຄຸນຂອງພຣະເຈົ້າທ່ານດີພ້ອມໃນ
ພຣະຄຣິດ, ທ່ານຍ່ອມບໍ່ມີທາງປະຕິເສດ
ອຳນາດຂອງພຣະເຈົ້າໄດ້ເລີຍ.
33 ແລະ ອີກຢ່າງໜຶ່ງ, ຖ້າຫາກໂດຍ
ພຣະຄຸນຂອງພຣະເຈົ້າທ່ານດີພ້ອມໃນ
ພຣະຄຣິດ, ແລະ ບໍ່ປະຕິເສດອຳນາດຂອງ
ພຣະອົງ, ເມື່ອນັ້ນທ່ານຍ່ອມໄດ້ຮັບ [ກ]ການ
ຊຳລະໃຫ້ບໍລິສຸດໃນພຣະຄຣິດ ໂດຍພຣະ
ຄຸນຂອງພຣະເຈົ້າ, ໂດຍທາງການຫລັ່ງ
[ຂ]ໂລຫິດຂອງພຣະຄຣິດ, ຊຶ່ງມີຢູ່ໃນພັນທະ
ສັນຍາຂອງພຣະບິດາອັນນຳໄປສູ່ [ຄ]ການ
ປົດບາບຂອງທ່ານ, ເພື່ອທ່ານຈະກາຍມາ
ເປັນ [ງ]ຜູ້ບໍລິສຸດ, ປາດສະຈາກມົນທິນ.
34 ແລະ ບັດນີ້ຂ້າພະເຈົ້າຂໍກ່າວຄຳອຳ
ລາຕໍ່ທຸກຄົນ. ໃນບໍ່ຊ້ານີ້ຂ້າພະເຈົ້າຈະໄປ
[ກ]ພັກຢູ່ໃນ [ຂ]ທີ່ສຸຂະເສີມຂອງພຣະເຈົ້າ, ຈົນ
ກວ່າ [ຄ]ວິນຍານ ແລະ ຮ່າງກາຍຂອງຂ້າພະ
ເຈົ້າຈະ [ງ]ເຂົ້າຮ່ວມກັນອີກ, ແລະ ຂ້າພະ
ເຈົ້າຈະຖືກນຳອອກມາດ້ວຍໄຊຊະນະທາງ
[ຈ]ອາກາດ, ເພື່ອມາພົບທ່ານຕໍ່ໜ້າບ່ອນພິ
ພາກສາອັນໜ້າ [ສ]ພໍພຣະໄທຂອງ [ຊ]ພຣະ
ເຢໂຮວາຜູ້ຍິ່ງໃຫຍ່, [ຍ]ຜູ້ພິພາກສາຜູ້ສະຖິດ
ນິລັນດອນຂອງທັງຄົນເປັນ ແລະ ຄົນຕາຍ.
ອາແມນ.

30 ກ 1 ນຟ 6:4; ມມ 9:27; ອທ 5:5.
ຂ ແອວ 5:57.
31 ກ ອຊຢ 52:1–2.
ຂ ຄມພ ຊີໂອນ.
ຄ ຄມພ ສະເຕກ.
ງ ອຊຢ 54:2.
ຈ ອທ 13:8.
32 ກ ມທ 11:28; 2 ນຟ 26:33; ຢຄ 1:7; ອມນ 1:26.
ຂ ມທ 5:48; 3 ນຟ 12:48. ຄມພ ດີພ້ອມທຸກຢ່າງ.
ຄ ຄພ 4:2; 59:5–6.
ງ 2 ນຟ 25:23.
33 ກ ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
ຂ ຄມພ ຊົດໃຊ້, ການຊົດໃຊ້.
ຄ ຄມພ ປົດບາບ, ການປົດບາບ.
ງ ຄມພ ສັກສິດ, ຄວາມສັກສິດ.
34 ກ ຄມພ ພັກຜ່ອນ.
ຂ ຄມພ ທີ່ສຸຂະເສີມ.
ຄ ຄມພ ວິນຍານ.
ງ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຈ 1 ທສນ 4:17.
ສ ຢຄ 6:13.
ຊ ຄມພ ເຢໂຮວາ.
ຍ ຄມພ ພຣະເຢຊູຄຣິດ—ພິພາກສາ.

ຈົບ

# ຄຳສອນ ແລະ ພັນທະສັນຍາ

ຂອງສາດສະໜາຈັກຂອງພຣະເຢຊູຄຣິດ
ແຫ່ງໄພ່ພົນຍຸກສຸດທ້າຍ

ບັນຈຸການເປີດເຜີຍທີ່ມອບໃຫ້ແກ່
ໂຈເຊັບ ສະມິດ, ຜູ້ເປັນສາດສະດາ

ພ້ອມດ້ວຍການເພີ່ມເຕີມບາງຢ່າງໂດຍຜູ້ສືບຕຳແໜ່ງຂອງເພິ່ນ
ໃນຝ່າຍປະທານຂອງສາດສະໜາຈັກ

# ສາລະບານ

ຄຳນຳ . . . . . . . . . . . . . . . . . . . . . . . . v
ລຳດັບຕາມວັນເດືອນປີຂອງເຫດການທີ່ເກີດຂຶ້ນ . . . . . . . . . . . . . . x
ພາກ . . . . . . . . . . . . . . . . . . . . . . . . 1
ຂໍ້ປະກາດຢ່າງເປັນທາງການ . . . . . . . . . . . . . . . . 406

# ຄຳນຳ

ຄຳສອນ ແລະ ພັນທະສັນຍາເປັນການຮວບຮວມຂອງການເປີດເຜີຍອັນສູງສົ່ງ ແລະ ການປະກາດທີ່ດົນໃຈ ຊຶ່ງມອບໃຫ້ເພື່ອການສ້າງຕັ້ງ ແລະ ເປັນຂໍ້ບັງຄັບຂອງອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ໃນຍຸກສຸດທ້າຍ. ເຖິງແມ່ນສ່ວນໃຫຍ່ຂອງພາກຕ່າງໆ ຈະເຈາະຈົງໃສ່ສະມາຊິກຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ແຕ່ຂ່າວສານ, ຄຳເຕືອນ, ແລະ ຄຳແນະນຳ ແມ່ນເພື່ອຜົນປະໂຫຍດຂອງມະນຸດຊາດທັງປວງ ແລະ ບັນຈຸການເຊື້ອເຊີນທຸກຜູ້ຄົນຢູ່ທຸກແຫ່ງຫົນໃຫ້ຟັງສຸລະສຽງຂອງອົງພຣະເຢຊູຄຣິດເຈົ້າ, ກ່າວຕໍ່ພວກເຂົາສຳລັບຄວາມຢູ່ເຢັນເປັນສຸກຝ່າຍໂລກຂອງພວກເຂົາ ແລະ ຄວາມລອດອັນເປັນນິດຂອງພວກເຂົາ.

ການເປີດເຜີຍສ່ວນໃຫຍ່ຢູ່ໃນການຮວບຮວມນີ້ ແມ່ນໄດ້ຮັບຜ່ານທາງໂຈເຊັບ ສະມິດ ຜູ້ລູກ ສາດສະດາ ແລະ ປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍຄົນທຳອິດ. ການເປີດເຜີຍ ສ່ວນອື່ນໆໄດ້ຖືກພິມອອກມາຜ່ານທາງຜູ້ສືບຕຳແໜ່ງຂອງເພິ່ນຢູ່ໃນຝ່າຍປະທານ (ເບິ່ງ ຄພ 135, 136, ແລະ 138, ແລະ ຂໍ້ປະກາດຢ່າງເປັນທາງການ 1 ແລະ 2).

ພຣະຄຳພີຄຳສອນ ແລະ ພັນທະສັນຍາ ເປັນເຫລັ້ມໜຶ່ງໃນໜັງສືມາດຕະຖານຂອງສາດສະໜາຈັກ ຊຶ່ງຮວມຢູ່ກັບພຣະຄຣິສຕະທຳຄຳພີທີ່ສັກສິດ, ພຣະຄຳພີມໍມອນ, ແລະ ພຣະຄຳພີໄຂ່ມຸກອັນລ້ຳຄ່າ. ເຖິງຢ່າງໃດກໍຕາມ, ຄຳສອນ ແລະ ພັນທະສັນຍາ ເປັນໜັງສືພິເສດ ເພາະມັນບໍ່ແມ່ນການແປຂອງບັນທຶກບູຮານ, ແຕ່ມີທີ່ມາຈາກສະໄໝປະຈຸບັນ ແລະ ຖືກມອບໃຫ້ໂດຍພຣະເຈົ້າ ຜ່ານທາງສາດສະດາທີ່ຖືກເລືອກໄວ້ຂອງພຣະອົງ ສຳລັບການຟື້ນຟູວຽກງານທີ່ສັກສິດ ແລະ ການສ້າງຕັ້ງອານາຈັກຂອງພຣະເຈົ້າ ຢູ່ເທິງແຜ່ນດິນໂລກໃນວັນເວລານີ້. ໃນການເປີດເຜີຍ, ເຮົາໄດ້ຍິນສຸລະສຽງອັນອ່ອນໂຍນແຕ່ໜັກແໜ້ນຂອງອົງພຣະເຢຊູຄຣິດເຈົ້າ, ກ່າວອີກເທື່ອໜຶ່ງໃນຍຸກສະໄໝຂອງຄວາມສົມບູນແຫ່ງເວລາ; ແລະ ວຽກງານທີ່ໄດ້ເລີ່ມຕົ້ນໃນນັ້ນ ເປັນການຕຽມຕໍ່ການສະເດັດມາຄັ້ງທີສອງຂອງພຣະອົງ, ໃນການບັນລຸຄວາມສຳເລັດ ແລະ ເພື່ອໃຫ້ສອດຄ່ອງຕາມຖ້ອຍຄຳຂອງສາດສະດາທີ່ສັກສິດທັງຫລາຍ ນັບແຕ່ການເລີ່ມຕົ້ນຂອງໂລກ.

ໂຈເຊັບ ສະມິດ ຜູ້ລູກ ເກີດໃນວັນທີ 23 ເດືອນທັນວາ, 1805, ໃນເມືອງຊາໂຣນ, ເຂດວິນເຊີ, ລັດເວີໝອນ. ຄາວຍັງນ້ອຍ, ເພິ່ນໄດ້ຍ້າຍໄປຢູ່ເມືອງໜຶ່ງ ຊຶ່ງປະຈຸບັນນີ້ເອີ້ນວ່າ ແມນເຈດສະເຕີ ນຳຄອບຄົວຂອງເພິ່ນ, ໃນພາກຕາເວັນຕົກ ຂອງລັດນິວຢອກ. ໃນຂະນະທີ່ເພິ່ນອາໄສຢູ່ທີ່ນັ້ນ ໃນລະດູໃບໄມ້ປົ່ງຂອງປີ 1820, ຕອນເພິ່ນມີອາຍຸໄດ້ສິບສີ່ປີ, ເພິ່ນໄດ້ເຫັນພາບທີ່ມາໃຫ້ເຫັນຄັ້ງທຳອິດ, ໃນປະສົບການນັ້ນ ພຣະເຈົ້າ, ພຣະບິດາຜູ້ສະຖິດນິລັນດອນ, ແລະ ພຣະບຸດຂອງພຣະອົງ ພຣະເຢຊູຄຣິດ ໄດ້ມາຢ້ຽມຢາມເພິ່ນ. ໃນພາບນັ້ນເພິ່ນຖືກບອກວ່າ ສາດສະໜາຈັກທີ່ແທ້ຈິງຂອງພຣະເຢຊູຄຣິດ ທີ່ໄດ້ຖືກຈັດຕັ້ງຂຶ້ນໃນສະໄໝພຣະຄຳພີໃໝ່, ແລະ ຊຶ່ງໄດ້ປະຕິບັດຄວາມສົມບູນຂອງພຣະກິດຕິຄຸນ ບໍ່ມີຢູ່ເທິງແຜ່ນດິນໂລກອີກແລ້ວ. ການສະແດງໃຫ້ປະຈັກ ອັນສູງສົ່ງຢ່າງອື່ນໆໄດ້ເກີດຂຶ້ນຫລັງຈາກນັ້ນ

ຊຶ່ງເພິ່ນໄດ້ຮັບການສິດສອນໂດຍເຫລົ່າທູດ; ມັນຖືກສະແດງແກ່ເພິ່ນວ່າ ພຣະເຈົ້າມີວຽກງານພິເສດໃຫ້ເພິ່ນເຮັດຢູ່ເທິງແຜ່ນດິນໂລກ ແລະ ວ່າ ຜ່ານເພິ່ນສາດສະໜາຈັກຂອງພຣະເຢຊູຄຣິດຈະຖືກຟື້ນຟູສູ່ແຜ່ນດິນໂລກ.

ເມື່ອເວລາຜ່ານໄປ, ໂຈເຊັບ ສະມິດ ໄດ້ແປ ແລະ ພິມພຣະຄຳພີມໍມອນດ້ວຍຄວາມຊ່ວຍເຫລືອຈາກສະຫວັນ. ໃນເວລາດຽວກັນເພິ່ນກັບອໍລິເວີ ຄາວເດີຣີ ໄດ້ຖືກແຕ່ງຕັ້ງສູ່ຖານະປະໂລຫິດແຫ່ງອາໂຣນໂດຍໂຢຮັນບັບຕິສະໂຕ ໃນເດືອນພຶດສະພາ 1829 (ເບິ່ງ ຄພ 13), ແລະ ບໍ່ດົນຈາກນັ້ນ ພວກເພິ່ນກໍໄດ້ ຖືກແຕ່ງຕັ້ງສູ່ຖານະປະໂລຫິດແຫ່ງເມນຄີເສເດັກໂດຍເປໂຕ, ຢາໂກໂບ, ແລະ ໂຢຮັນ ອັກຄະສາວົກໃນສະໄໝບູຮານ (ເບິ່ງ ຄພ 27:12). ການແຕ່ງຕັ້ງອື່ນໆໄດ້ເກີດຂຶ້ນຫລັງຈາກນັ້ນ ຊຶ່ງໃນນັ້ນຂໍກະແຈແຫ່ງຖານະປະໂລຫິດໄດ້ຖືກມອບໃຫ້ໂດຍໂມເຊ, ເອລີຢາ, ອີລາຍ, ແລະ ສາດສະດາໃນສະໄໝບູຮານຫລາຍທ່ານ (ເບິ່ງ ຄພ 110; 128:18, 21). ການແຕ່ງຕັ້ງດັ່ງກ່າວ, ຕາມຈິງແລ້ວ, ເປັນການຟື້ນຟູສິດອຳນາດອັນສູງສົ່ງໃຫ້ແກ່ມະນຸດຢູ່ເທິງແຜ່ນດິນໂລກ. ໃນວັນທີ 6 ເດືອນເມສາ, 1830, ພາຍໃຕ້ການນຳພາຈາກສະຫວັນ, ສາດສະດາໂຈເຊັບ ສະມິດ ໄດ້ຈັດຕັ້ງສາດສະໜາຈັກຂຶ້ນ, ແລະ ດັ່ງນັ້ນສາດສະໜາຈັກທີ່ແທ້ຈິງຂອງພຣະເຢຊູຄຣິດຈຶ່ງດຳເນີນອີກເທື່ອໜຶ່ງເປັນສະຖາບັນໃນທ່າມກາງມະນຸດ, ດ້ວຍສິດອຳນາດເພື່ອສິດສອນພຣະກິດຕິຄຸນ ແລະ ປະຕິບັດພິທີການແຫ່ງຄວາມລອດ. (ເບິ່ງ ຄພ 20 ແລະ ໄຂ່ມຸກອັນລ້ຳຄ່າ, ໂຈເຊັບ ສະມິດ—ປະຫວັດ 1.)

ການເປີດເຜີຍທີ່ສັກສິດເຫລົ່ານີ້ໄດ້ຮັບເປັນຄຳຕອບຕໍ່ຄຳອະທິຖານ, ໃນເວລາທີ່ຈຳເປັນ, ແລະ ອອກມາຈາກສະຖານະການຂອງຊີວິດຈິງທີ່ກ່ຽວພັນກັບຜູ້ຄົນແທ້ໆ. ສາດສະດາ ແລະ ເພື່ອນຮ່ວມງານຂອງເພິ່ນໄດ້ສະແຫວງຫາການນຳພາອັນສູງສົ່ງ, ແລະ ການເປີດເຜີຍເຫລົ່ານີ້ເປັນພະຍານວ່າ ພວກເພິ່ນໄດ້ຮັບມັນ. ໃນການເປີດເຜີຍ, ເຮົາເຫັນການຟື້ນຟູ ແລະ ການເປີດພຣະກິດຕິຄຸນຂອງພຣະເຢຊູຄຣິດໃຫ້ເຫັນ ແລະ ການນຳເຂົ້າສູ່ຍຸກສະໄໝຂອງຄວາມສົມບູນແຫ່ງເວລາ. ໃນການເປີດເຜີຍນີ້ ກໍໄດ້ສະແດງໃຫ້ເຫັນ ເຖິງການເຄື່ອນຍ້າຍໄປທາງທິດຕາເວັນຕົກນຳອີກຂອງສາດສະໜາຈັກຈາກລັດນິວຢອກ ແລະ ລັດເພັນໂຊເວເນຍ ຫາລັດໂອໄຮໂອ, ຫາລັດມີເຊີຣີ, ຫາລັດອີລີນອຍ, ແລະ ໃນທີ່ສຸດທ້າຍ ຫາອ່າວອັນກວ້າງໃຫຍ່ໃນພາກຕາເວັນຕົກຂອງອາເມຣິກາ ແລະ ຄວາມທຸກຍາກລຳບາກຢ່າງໜັກຂອງໄພ່ພົນຂອງພຣະເຈົ້າ ໃນຄວາມພະຍາຍາມທີ່ຈະສ້າງຊີໂອນຂຶ້ນເທິງແຜ່ນດິນໂລກໃນສະໄໝປະຈຸບັນ.

ພາກຕົ້ນຫລາຍໆພາກກ່ຽວຂ້ອງກັບເລື່ອງລາວການແປ ແລະ ການພິມພຣະຄຳພີມໍມອນ (ເບິ່ງ ພາກ 3, 5, 10, 17, ແລະ 19). ພາກຕໍ່ຈາກນັ້ນບາງພາກ ສະທ້ອນເຖິງວຽກງານຂອງສາດສະດາໂຈເຊັບ ສະມິດ ໃນການເຮັດວຽກງານການແປທີ່ໄດ້ຮັບການດົນໃຈສຳລັບພຣະຄຣິສຕະທຳຄຳພີ, ຊຶ່ງໃນລະຫວ່າງນັ້ນໄດ້ຮັບພາກທີ່ມີຄຳສອນອັນສຳຄັນຫລາຍໆພາກ (ເບິ່ງ, ຍົກຕົວຢ່າງ, ພາກ 37, 45, 73, 76, 77, 86, 91, ແລະ 132, ແຕ່ລະພາກມີຄວາມສຳພັນໂດຍກົງກັບການແປພຣະຄຣິສຕະທຳຄຳພີ).

ໃນການເປີດເຜີຍ, ຄຳສອນຂອງພຣະກິດຕິຄຸນໄດ້ຖືກສະເໜີພ້ອມດ້ວຍຄຳອະທິບາຍກ່ຽວກັບເລື່ອງລາວອັນເປັນພື້ນຖານເຊັ່ນທຳມະຊາດຂອງຝ່າຍພຣະເຈົ້າ, ຕົ້ນກຳເນີດຂອງ

ມະນຸດ, ຄວາມຈິງແທ້ຂອງຊາຕານ, ຈຸດປະສົງຂອງຄວາມເປັນມະຕະ, ຄວາມຈຳເປັນໃນການເຊື່ອຟັງ, ຄວາມຈຳເປັນໃນການກັບໃຈ, ການທຳງານຂອງພຣະວິນຍານສັກສິດ, ພິທີການ ແລະ ການປະຕິບັດທີ່ກ່ຽວຂ້ອງກັບຄວາມລອດ, ຊາຕາກຳຂອງແຜ່ນດິນໂລກ, ສະພາບອະນາຄົດຂອງມະນຸດຫລັງຈາກການຟື້ນຄືນຊີວິດ ແລະ ການພິພາກສາ, ຄວາມເປັນນິລັນດອນຂອງຄວາມສຳພັນຂອງການແຕ່ງງານ, ແລະ ທຳມະຊາດນິລັນດອນຂອງຄອບຄົວ. ເຊັ່ນດຽວກັນ, ການຄ່ອຍໆເຜີຍໂຄງສ້າງການບໍລິຫານງານຂອງສາດສະໜາຈັກຈາກການເອີ້ນອະທິການ, ຝ່າຍປະທານສູງສຸດ, ສະພາອັກຄະສາວົກສິບສອງ, ແລະ ສາວົກເຈັດສິບ ແລະ ການຈັດຕັ້ງຕຳແໜ່ງໜ້າທີ່ຄວບຄຸມ ແລະ ກຸ່ມອື່ນໆ. ທ້າຍສຸດ ປະຈັກພະຍານທີ່ໃຫ້ໄວ້ເຖິງພຣະເຢຊູຄຣິດ—ຄວາມສັກສິດຂອງພຣະອົງ, ຄວາມເດຊານຸພາບຂອງພຣະອົງ, ຄວາມດີພ້ອມທຸກຢ່າງຂອງພຣະອົງ, ຄວາມຮັກຂອງພຣະອົງ, ແລະ ອຳນາດແຫ່ງການໄຖ່ຂອງພຣະອົງ—ເຮັດໃຫ້ໜັງສືເຫລັ້ມນີ້ລ້ຳຄ່າສຳລັບຄອບຄົວມະນຸດ ແລະ "ມີຄ່າຫລາຍກວ່າຄວາມຮັ່ງມີຂອງທັງແຜ່ນດິນໂລກ" (ເບິ່ງ ຫົວຂໍ້ ຂອງ ຄພ 70).

ຕົ້ນເດີມ ການເປີດເຜີຍໄດ້ຖືກບັນທຶກໄວ້ໂດຍ ຜູ້ຂຽນຂອງໂຈເຊັບ ສະມິດ, ແລະ ສະມາຊິກຂອງສາດສະໜາຈັກ ໄດ້ເອົາໜັງສືດັ່ງກ່າວ ທີ່ຂຽນດ້ວຍມືໄປໃຫ້ກັນອ່ານ ດ້ວຍຄວາມກະຕືລືລົ້ນ. ເພື່ອສ້າງບັນທຶກຖາວອນ, ຜູ້ຂຽນຈຶ່ງໄດ້ຈັດພິມການເປີດເຜີຍເຫລົ່ານີ້ເປັນປຶ້ມບັນທຶກຕົ້ນສະບັບ, ຊຶ່ງຜູ້ນຳຂອງສາດສະໜາຈັກ ໄດ້ໃຊ້ໃນການຕຽມການເປີດເຜີຍສຳລັບການພິມ. ໂຈເຊັບ ແລະ ໄພ່ພົນຂອງພຣະເຈົ້າໃນສະໄໝເລີ່ມຕົ້ນ ໄດ້ນັບຖືການເປີດເຜີຍໃນແບບດຽວກັນກັບເຂົາເຈົ້ານັບຖືສາດສະໜາຈັກວ່າ: ດຳລົງຢູ່, ປ່ຽນແປງເລື້ອຍໄປ, ແລະ ຂຶ້ນຢູ່ກັບການຫລໍ່ຫລອມ ດ້ວຍການເປີດເຜີຍເພີ່ມເຕີມ. ເຂົາເຈົ້າຍັງຮັບຮູ້ວ່າ ອາດມີຂໍ້ຄວາມທີ່ຜິດໂດຍບໍ່ເຈດຕະນາ ໃນຂັ້ນຕອນຂອງການເຮັດສຳເນົາ ແລະ ຕຽມສຳລັບການຈັດພິມ. ດັ່ງນັ້ນ, ໃນກອງປະຊຸມໃຫຍ່ ປີ 1831 ສາດສະໜາຈັກ ຈຶ່ງໄດ້ຂໍໃຫ້ ໂຈເຊັບ ສະມິດ "ດັດແປງຂໍ້ຄວາມທີ່ຜິດ ຫລື ຄວາມຜິດເຫລົ່ານັ້ນ ຊຶ່ງເພິ່ນອາດພົບເຫັນໂດຍຜ່ານທາງພຣະວິນຍານສັກສິດ."

ຫລັງຈາກການເປີດເຜີຍໄດ້ຖືກທົບທວນ ແລະ ດັດແປງແລ້ວ, ສະມາຊິກຂອງສາດສະໜາຈັກ ໃນລັດມີເຊີຣີ ຈຶ່ງໄດ້ເລີ່ມຕົ້ນພິມປຶ້ມທີ່ຊື່ວ່າ *A Book of Commandments for the Government of the Church of Christ,* (ແປວ່າ ໜັງສືພຣະບັນຍັດສຳລັບການປົກຄອງສາດສະໜາຈັກຂອງພຣະຄຣິດ) ຊຶ່ງບັນຈຸການເປີດເຜີຍຊ່ວງທຳອິດຂອງສາດສະດາ. ຄວາມພະຍາຍາມເທື່ອທຳອິດ ທີ່ຈະພິມການເປີດເຜີຍເຫລົ່ານີ້ ໄດ້ສິ້ນສຸດລົງ, ເຖິງຢ່າງໃດກໍຕາມ, ເມື່ອກຸ່ມອັນຕະພານໄດ້ທຳລາຍໂຮງພິມຂອງໄພ່ພົນຂອງພຣະເຈົ້າໃນເຂດແຈ໊ກສັນ ໃນວັນທີ 20 ເດືອນກໍລະກົດ, 1833.

ຫລັງຈາກໄດ້ຍິນເລື່ອງໂຮງພິມໃນລັດມີເຊີຣີຖືກທຳລາຍ, ໂຈເຊັບ ສະມິດ ແລະ ຜູ້ນຳຄົນອື່ນໆຂອງສາດສະໜາຈັກ ຈຶ່ງໄດ້ຕຽມຈັດພິມການເປີດເຜີຍ ຢູ່ໃນເມືອງເຄີດແລນ, ລັດໂອໄຮໂອ. ໃນການດັດແປງຂໍ້ຄວາມທີ່ຜິດຄືນໃໝ່, ໃນການອະທິບາຍຂໍ້ຄວາມໃຫ້ແຈ່ມແຈ້ງກວ່າເກົ່າ, ແລະ ໃນການຮັບຮູ້ຄວາມກ້າວໜ້າ ໃນສາດສະໜາຈັກ ເລື່ອງຄຳສອນ ແລະ ການຈັດຕັ້ງ, ໂຈເຊັບ ສະມິດ ຈຶ່ງໄດ້ເປັນຜູ້ຄວບຄຸມການແກ້ໄຂການເປີດເຜີຍບາງຕອນ ເພື່ອຕຽມມັນສຳລັບການພິມ ໃນປີ 1835 ເປັນປຶ້ມຊື່ວ່າ *Doctrine and Covenants*

*of the Church of the Latter Day Saints* (ຄຳສອນ ແລະ ພັນທະສັນຍາ ຂອງ ສາດສະໜາຈັກຂອງໄພ່ພົນຍຸກສຸດທ້າຍ). ໂຈເຊັບ ສະມິດ ໄດ້ອະນຸມັດໃຫ້ຈັດພິມ ຄຳສອນ ແລະ ພັນທະສັນຍາ ອີກຊຸດສະບັບ, ຊຶ່ງໄດ້ຖືກຈັດພິມ ຫລັງຈາກສາດສະດາໄດ້ຖືກຂ້າ ບໍ່ພຽງເທົ່າໃດເດືອນ ໃນປີ 1844.

ໄພ່ພົນຍຸກສຸດທ້າຍລຸ້ນທຳອິດ ໄດ້ນັບຖື ແລະ ຖືວ່າການເປີດເຜີຍ ເປັນຂ່າວສານຈາກພຣະເຈົ້າ. ໃນໂອກາດໜຶ່ງ ໃນທ້າຍປີ 1831, ແອວເດີຂອງສາດສະໜາຈັກຫລາຍຄົນ ໄດ້ສະແດງປະຈັກພະຍານຢ່າງໜັກແໜ້ນວ່າ ພຣະຜູ້ເປັນເຈົ້າໄດ້ເປັນພະຍານແກ່ຈິດວິນຍານຂອງເຂົາເຈົ້າ ເຖິງຄວາມຈິງຂອງການເປີດເຜີຍດັ່ງກ່າວ. ປະຈັກພະຍານນັ້ນ ໄດ້ຖືກພິມຢູ່ໃນ ຄຳສອນ ແລະ ພັນທະສັນຍາ ຊຸດສະບັບ 1835 ເປັນປະຈັກພະຍານທີ່ຂຽນໂດຍ ອັກຄະສາວົກສິບສອງ ທີ່ວ່າ:

ປະຈັກພະຍານຂອງ
ອັກຄະສາວົກສິບສອງທີ່ມີຕໍ່ຄວາມຈິງຂອງ
ໜັງສືຄຳສອນ ແລະ ພັນທະສັນຍາ

*ປະຈັກພະຍານຂອງພະຍານທີ່ມີຕໍ່ໜັງສືພຣະບັນຍັດຂອງພຣະຜູ້ເປັນເຈົ້າ, ຊຶ່ງພຣະບັນຍັດເຫລົ່ານີ້ພຣະອົງໄດ້ມອບໃຫ້ແກ່ສາດສະໜາຈັກຂອງພຣະອົງຜ່ານໂຈເຊັບ ສະມິດ, ຜູ້ລູກ, ຜູ້ໄດ້ຖືກແຕ່ງຕັ້ງໂດຍສຽງຂອງສາດສະໜາຈັກເພື່ອຈຸດປະສົງນີ້:*

ສະນັ້ນ ພວກເຮົາຈຶ່ງຮູ້ສຶກເຕັມໃຈທີ່ຈະສະແດງປະຈັກພະຍານຕໍ່ທົ່ວໂລກຂອງມະນຸດຊາດ, ຕໍ່ມະນຸດສະໂລກທັງໝົດຂອງພື້ນແຜ່ນດິນໂລກ, ວ່າພຣະຜູ້ເປັນເຈົ້າໄດ້ເປັນພະຍານແກ່ຈິດວິນຍານຂອງພວກເຮົາ, ຜ່ານທາງພຣະວິນຍານບໍລິສຸດ ຊຶ່ງສາຍສ່ອງມາຍັງພວກເຮົາ, ວ່າພຣະບັນຍັດເຫລົ່ານີ້ໄດ້ຖືກມອບໃຫ້ໂດຍການດົນໃຈຈາກພຣະເຈົ້າ, ແລະ ເປັນປະໂຫຍດສຳລັບມະນຸດທັງປວງ ແລະ ເປັນຄວາມຈິງແທ້ໆ.

ພວກເຮົາຂໍມອບປະຈັກພະຍານນີ້ຕໍ່ໂລກ, ໂດຍທີ່ພຣະຜູ້ເປັນເຈົ້າເປັນຜູ້ຊ່ວຍຂອງພວກເຮົາ; ແລະ ໂດຍຜ່ານພຣະຄຸນຂອງພຣະເຈົ້າອົງເປັນພຣະບິດາ, ແລະ ພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, ທີ່ພວກເຮົາໄດ້ຮັບອະນຸຍາດໃຫ້ມີສິດທິພິເສດນີ້ໃນການສະແດງປະຈັກພະຍານຕໍ່ໂລກ, ຊຶ່ງໃນການນີ້ພວກເຮົາປິຕິຍິນດີຢ່າງຫລວງຫລາຍ, ໂດຍອະທິຖານຫາພຣະຜູ້ເປັນເຈົ້າສະເໝີເພື່ອລູກຫລານມະນຸດຈະໄດ້ຮັບຜົນປະໂຫຍດໂດຍການນີ້.

ລາຍຊື່ຂອງອັກຄະສາວົກສິບສອງມີດັ່ງນີ້:

| | | |
|---|---|---|
| ທອມມັສ ບີ ມາສ໌ | ອໍສັນ ຮາຍດ໌ | ວິວລຽມ ສະມິດ |
| ເດວິດ ດັບເບິນຢູ ແພດເຕັນ | ວິວລຽມ ອີ ມັກລີລິນ | ອໍສັນ ພະແຣັດ |
| ບຣິກຳ ຢັງ | ພາລີ ພີ ພະແຣັດ | ຈອນ ແອັຟ ບອຍຕັນ |
| ຮີເບີ ຊີ ຄິມໂບ | ລຸກ ແອັສ ຈອນສັນ | ໄລມັນ ອີ ຈອນສັນ |

ໃນການພິມ ຄຳສອນ ແລະ ພັນທະສັນຍາ ຄັ້ງຕໍ່ໆໄປ, ການເປີດເຜີຍ ຫລື ເລື່ອງລາວອື່ນໆທີ່ບັນທຶກໄວ້ໄດ້ຖືກຕື່ມໃສ່ນຳ, ດັ່ງທີ່ໄດ້ຮັບ ແລະ ຖືກຮັບຮູ້ຈາກການຊຸມນຸມ ຫລື ກອງປະຊຸມໃຫຍ່ຂອງສາດສະໜາຈັກ. ຊຸດສະບັບ 1876, ຊຶ່ງຕຽມໂດຍ ແອວເດີ ອໍສັນ ພະແຣັດ ພາຍໃຕ້ການຊີ້ນຳຂອງ ບຣິກຳ ຍັງ, ໄດ້ຖືກຮຽບຮຽງການເປີດເຜີຍ ຕາມວັນເດືອນປີ ຂອງເຫດການທີ່ເກີດຂຶ້ນ ແລະ ໄດ້ຕື່ມເຕີມຫົວຂໍ້ໃໝ່ໃສ່ນຳ ພ້ອມດ້ວຍຄຳນຳກ່ຽວກັບປະຫວັດສາດ.

ໂດຍເລີ່ມຕົ້ນຈາກສະບັບທີ່ພິມໃນປີ 1835, ບົດຮຽນເຈັດບົດກ່ຽວກັບວິຊາການສາດສະໜາກໍໄດ້ຖືກຮວມໃສ່ນຳ; ຊື່ວ່າ *Lectures on Faith* (ຄຳບັນຍາຍເລື່ອງສັດທາ). ສິ່ງເຫລົ່ານີ້ໄດ້ຖືກຈັດຕຽມໄວ້ເພື່ອໃຊ້ຢູ່ໃນໂຮງຮຽນຂອງສາດສະດາໃນເມືອງເຄີດແລນ, ລັດໂອໄຮໂອ, ຈາກປີ 1834 ເຖິງປີ 1835. ເຖິງແມ່ນວ່າຈະມີປະໂຫຍດໃນຄຳສອນ ແລະ ຄຳແນະນຳ, ຄຳບັນຍາຍເຫລົ່ານີ້ໄດ້ຖືກຕັດອອກຈາກຄຳສອນ ແລະ ພັນທະສັນຍານັບຕັ້ງແຕ່ສະບັບພິມໃນປີ 1921 ເພາະວ່າມັນບໍ່ໄດ້ຖືກມອບໃຫ້ ຫລື ສະເໜີເປັນການເປີດເຜີຍຕໍ່ທັງສາດສະໜາຈັກ.

ໃນຄຳສອນ ແລະ ພັນທະສັນຍາ ສະບັບເປັນພາສາອັງກິດ ຊຸດສະບັບ 1981, ມີເອກະສານສາມສະບັບ ທີ່ໄດ້ຖືກຕື່ມໃສ່ ເປັນເທື່ອທຳອິດ. ນັ້ນຄື ພາກທີ, 137 ແລະ 138, ຊຶ່ງບອກເຖິງເລື່ອງລາວກ່ຽວກັບຄວາມລອດຂອງຄົນຕາຍ, ແລະ ຂໍ້ປະກາດຢ່າງເປັນທາງການ 2, ຊຶ່ງປະກາດວ່າ ສະມາຊິກຜູ້ຊາຍທຸກຄົນຂອງສາດສະໜາຈັກທີ່ມີຄ່າຄວນ ສາມາດໄດ້ຮັບການແຕ່ງຕັ້ງ ສູ່ຖານະປະໂລຫິດ ໂດຍບໍ່ແຍກແຍະເຊື້ອຊາດ ແລະ ຜິວພັນ.

ຂໍ້ຄວາມທີ່ຜິດຜ່ານມາ ກໍໄດ້ຖືກດັດແປງ ຢູ່ໃນ ຄຳສອນ ແລະ ພັນທະສັນຍາ ຊຸດໃໝ່ແຕ່ລະຊຸດ ແລະ ຂໍ້ມູນໃໝ່ກໍໄດ້ຖືກຕື່ມໃສ່, ໂດຍສະເພາະ ຢູ່ໃນຫົວຂໍ້ພາກປະຫວັດສາດ. ຊຸດລ່າສຸດໃນປະຈຸບັນ ມີທັງວັນທີ ແລະ ຊື່ຂອງສະຖານທີ່ ແລະ ຂໍ້ຄວາມທີ່ຜິດ ກໍໄດ້ຖືກດັດແປງ. ການປ່ຽນແປງເຫລົ່ານີ້ໄດ້ກະທຳຂຶ້ນເພື່ອເຮັດໃຫ້ເນື້ອຫາສອດຄ່ອງກັບຂໍ້ມູນຂອງປະຫວັດສາດ ທີ່ຖືກຕ້ອງຫລາຍທີ່ສຸດ. ຈຸດເດັ່ນອື່ນໆຂອງສະບັບລ່າສຸດນີ້ ແມ່ນຮ່ວມດ້ວຍແຜນທີ່ ທີ່ປັບປຸງໃໝ່ ຊຶ່ງສະແດງໃຫ້ເຫັນສະຖານທີ່ສຳຄັນຕ່າງໆ ບ່ອນທີ່ໄດ້ຮັບການເປີດເຜີຍ, ພ້ອມທັງ ຮູບພາບໃໝ່ ຂອງສະຖານທີ່ປະຫວັດສາດຂອງສາດສະໜາຈັກ, ຂໍ້ອ້າງອີງໃສ່ກັບພຣະຄຳພີ, ຫົວພາກ, ແລະ ບົດສະຫລຸບເນື້ອຫາຂອງເລື່ອງ, ທຸກຢ່າງໄດ້ຖືກຈັດໄວ້ເພື່ອຊ່ວຍເຫລືອຜູ້ອ່ານໃຫ້ເຂົ້າໃຈ ແລະ ປິຕິຍິນດີໃນຂ່າວສານຂອງພຣະຜູ້ເປັນເຈົ້າຕາມທີ່ໄດ້ໃຫ້ໄວ້ໃນຄຳສອນ ແລະ ພັນທະສັນຍາ. ຂໍ້ມູນສຳລັບຫົວພາກ ໄດ້ຖືກຄັດລອກເອົາມາຈາກ ຕົ້ນສະບັບຂອງປະຫວັດສາດຂອງສາດສະໜາຈັກ ແລະ ຈາກ *History of the Church* (ປະຫວັດສາດຂອງສາດສະໜາຈັກ) ທີ່ຈັດພິມແລ້ວ (ຮ່ວມກັນ ຢູ່ໃນຫົວພາກແມ່ນກ່າວເຖິງປະຫວັດຂອງໂຈເຊັບ ສະມິດ) ແລະ ໃນ *Joseph Smith Papers* (ເອກະສານຂອງໂຈເຊັບ ສະມິດ).

# ລຳດັບສາລະບານຕາມວັນເດືອນປີຂອງເຫດການທີ່ເກີດຂຶ້ນ


| *ວັນທີ* | | *ສະຖານທີ່* | *ພາກ* |
|---|---|---|---|
| 1823 | ເດືອນກັນຍາ | ເມືອງແມນເຈດສະເຕີ, ລັດນິວຢອກ | 2 |
| 1828 | ເດືອນກໍລະກົດ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 3 |
| 1829 | ເດືອນກຸມພາ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 4 |
| | ເດືອນມີນາ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 5 |
| | ເດືອນເມສາ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 6, 7, 8, 9, 10 |
| | ເດືອນພຶດສະພາ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 11, 12, 13* |
| | ເດືອນມິຖຸນາ | ເມືອງເຟແອດ, ລັດນິວຢອກ | 14, 15, 16, 17, 18 |
| | ລະດູແລ້ງ | ເມືອງແມນເຈດສະເຕີ, ລັດນິວຢອກ | 19 |
| 1830 | | ເຂດເວນ, ລັດນິວຢອກ | 74 |
| | ເດືອນເມສາ | ເມືອງເຟແອດ, ລັດນິວຢອກ | 20*, 21 |
| | ເດືອນເມສາ | ເມືອງແມນເຈດສະເຕີ, ລັດນິວຢອກ | 22, 23 |
| | ເດືອນກໍລະກົດ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 24, 25, 26 |
| | ເດືອນສິງຫາ | ເມືອງຮາມໂມນີ, ລັດເພັນໄຊເວເນຍ | 27 |
| | ເດືອນກັນຍາ | ເມືອງເຟແອດ, ລັດນິວຢອກ | 28, 29, 30, 31 |
| | ເດືອນຕຸລາ | ເມືອງແມນເຈດສະເຕີ, ລັດນິວຢອກ | 32 |
| | ເດືອນຕຸລາ | ເມືອງເຟແອດ, ລັດນິວຢອກ | 33 |
| | ເດືອນພະຈິກ | ເມືອງເຟແອດ, ລັດນິວຢອກ | 34 |
| | ເດືອນທັນວາ | ເມືອງເຟແອດ, ລັດນິວຢອກ | 35*, 36*, 37* |
| 1831 | ເດືອນມັງກອນ | ເມືອງເຟແອດ, ລັດນິວຢອກ | 38, 39, 40 |
| | ເດືອນກຸມພາ | ເມືອງເຄີດແລນ, ລັດໂອໄຮໂອ | 41, 42, 43, 44 |
| | ເດືອນມີນາ | ເມືອງເຄີດແລນ, ລັດໂອໄຮໂອ | 45, 46, 47, 48 |
| | ເດືອນພຶດສະພາ | ເມືອງເຄີດແລນ, ລັດໂອໄຮໂອ | 49, 50 |
| | ເດືອນພຶດສະພາ | ເມືອງທອມສັນ, ລັດໂອໄຮໂອ | 51 |
| | ເດືອນມິຖຸນາ | ເມືອງເຄີດແລນ, ລັດໂອໄຮໂອ | 52, 53, 54, 55, 56 |
| | ເດືອນກໍລະກົດ | ຊີໂອນ, ເຂດແຈັກສັນ, ລັດມິເຊີຣີ | 57 |
| | ເດືອນສິງຫາ | ຊີໂອນ, ເຂດແຈັກສັນ, ລັດມິເຊີຣີ | 58, 59 |
| | ເດືອນສິງຫາ | ເມືອງອິນດີເພັນເດັນສ໌, ລັດມິເຊີຣີ | 60 |
| | ເດືອນສິງຫາ | ແມ່ນ້ຳມິເຊີຣີ, ລັດມິເຊີຣີ. | 61 |
| | ເດືອນສິງຫາ | ເມືອງຊາຣິຕັນ, ລັດມິເຊີຣີ | 62 |
| | ເດືອນສິງຫາ | ເມືອງເຄີດແລນ, ລັດໂອໄຮໂອ | 63 |
| | ເດືອນກັນຍາ | ເມືອງເຄີດແລນ, ລັດໂອໄຮໂອ | 64 |
| | ເດືອນຕຸລາ | ເມືອງໄຮຣຳ, ລັດໂອໄຮໂອ | 65, 66 |
| | ເດືອນພະຈິກ | ເມືອງໄຮຣຳ, ລັດໂອໄຮໂອ | 1, 67, 68, 69, 70, 133 |
| | ເດືອນທັນວາ | ເມືອງໄຮຣຳ, ລັດໂອໄຮໂອ | 71 |


*** ຢູ່ທີ່ ຫລື ໃກ້ບ່ອນທີ່ກ່າວເຖິງ**

| *ວັນທີ* | | *ສະຖານທີ່* | *ພາກ* |
|---|---|---|---|
| | ເດືອນທັນວາ | ເມືອງເຄີດແລນ, ລັດໂອໄຮໂອ | .72 |
| 1832 | ເດືອນມັງກອນ | ເມືອງໄຮຣຳ, ລັດໂອໄຮໂອ | .73 |
| | ເດືອນມັງກອນ | ເມືອງອາມເຮີດ, ລັດໂອໄຮໂອ | .75 |
| | ເດືອນກຸມພາ | ເມືອງໄຮຣຳ, ລັດໂອໄຮໂອ | .76 |
| | ເດືອນມີນາ | ເມືອງໄຮຣຳ, ລັດໂອໄຮໂອ | 77, 79, 80, 81 |
| | ເດືອນມີນາ | ເມືອງເຄີດແລນ, ລັດໂອໄຮໂອ | .78 |
| | ເດືອນເມສາ | ເມືອງອິນດີເພັນເດັນສ໌, ລັດມິເຊີຣີ | 82, 83 |
| | ເດືອນສິງຫາ | ເມືອງໄຮຣຳ, ລັດໂອໄຮໂອ | .99 |
| | ເດືອນກັນຍາ | ເມືອງເຄີດແລນ, ລັດໂອໄຮໂອ | .84 |
| | ເດືອນພະຈິກ | ເມືອງເຄີດແລນ, ລັດໂອໄຮໂອ | .85 |
| | ເດືອນທັນວາ | ເມືອງເຄີດແລນ, ລັດໂອໄຮໂອ | 86, 87*, 88 |
| 1833 | ເດືອນກຸມພາ | ເມືອງເຄີດແລນ, ລັດໂອໄຮໂອ | .89 |
| | ເດືອນມີນາ | ເມືອງເຄີດແລນ, ລັດໂອໄຮໂອ | 90, 91, 92 |
| | ເດືອນພຶດສະພາ | ເມືອງເຄີດແລນ, ລັດໂອໄຮໂອ | .93 |
| | ເດືອນມິຖຸນາ | ເມືອງເຄີດແລນ, ລັດໂອໄຮໂອ | 95, 96 |
| | ເດືອນສິງຫາ | ເມືອງເຄີດແລນ, ລັດໂອໄຮໂອ | 94, 97, 98 |
| | ເດືອນຕຸລາ | ເມືອງແພຣີສະເບີກ, ລັດນິວຢອກ | 100 |
| | ເດືອນທັນວາ | ເມືອງເຄີດແລນ, ລັດໂອໄຮໂອ | 101 |
| 1834 | ເດືອນກຸມພາ | ເມືອງເຄີດແລນ, ລັດໂອໄຮໂອ | .102, 103 |
| | ເດືອນເມສາ | ເມືອງເຄີດແລນ, ລັດໂອໄຮໂອ | 104* |
| | ເດືອນມິຖຸນາ | ແມ່ນ້ຳຟິດຊິງ, ລັດມິເຊີຣີ | 105 |
| | ເດືອນພະຈິກ | ເມືອງເຄີດແລນ, ລັດໂອໄຮໂອ | 106 |
| 1835 | ເດືອນເມສາ | ເມືອງເຄີດແລນ, ລັດໂອໄຮໂອ | 107 |
| | ເດືອນສິງຫາ | ເມືອງເຄີດແລນ, ລັດໂອໄຮໂອ | 134 |
| | ເດືອນທັນວາ | ເມືອງເຄີດແລນ, ລັດໂອໄຮໂອ | 108 |
| 1836 | ເດືອນມັງກອນ | ເມືອງເຄີດແລນ, ລັດໂອໄຮໂອ | 137 |
| | ເດືອນມີນາ | ເມືອງເຄີດແລນ, ລັດໂອໄຮໂອ | 109 |
| | ເດືອນເມສາ | ເມືອງເຄີດແລນ, ລັດໂອໄຮໂອ | 110 |
| | ເດືອນສິງຫາ | ເມືອງຊາເລັມ, ລັດມາສາຊູເສດສ໌ | 111 |
| 1837 | ເດືອນກໍລະກົດ | ເມືອງເຄີດແລນ, ລັດໂອໄຮໂອ | 112 |
| 1838 | ເດືອນມີນາ | ເມືອງຟາແວັດ, ລັດມິເຊີຣີ | 113* |
| | ເດືອນເມສາ | ເມືອງຟາແວັດ, ລັດມິເຊີຣີ | .114, 115 |
| | ເດືອນພຶດສະພາ | ເມືອງສະປຣິງຮຽວ, ເຂດເດວີ, ລັດມິເຊີຣີ | 116 |
| | ເດືອນກໍລະກົດ | ເມືອງຟາແວັດ, ລັດມິເຊີຣີ | 117, 118, 119, 120 |
| 1839 | ເດືອນມີນາ | ຄຸກລີເບີຕີ, ເຂດຄະເລ, ລັດມິເຊີຣີ | 121, 122, 123 |
| 1841 | ເດືອນມັງກອນ | ເມືອງນາວູ, ລັດອິລິນອຍ | 124 |
| | ເດືອນມີນາ | ເມືອງນາວູ, ລັດອິລິນອຍ | 125 |
| | ເດືອນກໍລະກົດ | ເມືອງນາວູ, ລັດອິລິນອຍ | 126 |


*** ຢູ່ທີ່ ຫລື ໃກ້ບ່ອນທີ່ກ່າວເຖິງ**

| *ວັນທີ* | | *ສະຖານທີ່* | *ພາກ* |
|---|---|---|---|
| 1842 | ເດືອນກັນຍາ | ເມືອງນາວູ, ລັດອິລິນອຍ | 127, 128 |
| 1843 | ເດືອນກຸມພາ | ເມືອງນາວູ, ລັດອິລິນອຍ | 129 |
| | ເດືອນເມສາ | ເມືອງຣາມັສ, ລັດອິລິນອຍ | 130 |
| | ເດືອນພຶດສະພາ | ເມືອງຣາມັສ, ລັດອິລິນອຍ | 131 |
| | ເດືອນກໍລະກົດ | ເມືອງນາວູ, ລັດອິລິນອຍ | 132 |
| 1844 | ເດືອນມິຖຸນາ | ເມືອງນາວູ, ລັດອິລິນອຍ | 135 |
| 1847 | ເດືອນມັງກອນ | ເມືອງວິນເຕີຄວດເຕີສ໌ (ຕອນນີ້ ລັດເນບຣາສ໌ກາ) | 136 |
| 1890 | ເດືອນຕຸລາ | ເມືອງເຊົາເລັກ, ລັດຢູທາ | ຂໍ້ປະກາດຢ່າງເປັນທາງການ 1 |
| 1918 | ເດືອນຕຸລາ | ເມືອງເຊົາເລັກ, ລັດຢູທາ | 138 |
| 1978 | ເດືອນມິຖຸນາ | ເມືອງເຊົາເລັກ, ລັດຢູທາ | ຂໍ້ປະກາດຢ່າງເປັນທາງການ 2 |

# ຄຳສອນ ແລະ ພັນທະສັນຍາ

## ພາກທີ 1

*ການເປີດເຜີຍທີ່ມອບໃຫ້ຜ່ານທາງໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນວັນທີ 1 ເດືອນພະຈິກ, 1831, ລະຫວ່າງກອງປະຊຸມໃຫຍ່ພິເສດຂອງພວກແອວເດີຂອງສາດສະໜາຈັກ, ຈັດຂຶ້ນທີ່ເມືອງໄຮຣຳ, ລັດໂອໄຮໂອ. ມີການເປີດເຜີຍຫລາຍຢ່າງທີ່ໄດ້ຮັບຈາກພຣະຜູ້ເປັນເຈົ້າກ່ອນເວລານີ້, ແລະ ການຮວບຮວມການເປີດເຜີຍເຫລົ່ານີ້ເພື່ອພິມເປັນປຶ້ມຄືຫົວຂໍ້ສຳຄັນທີ່ເຫັນພ້ອມກັນໃນກອງປະຊຸມໃຫຍ່. ພາກນີ້ປະກອບເປັນຄຳນຳຕໍ່ຄຳສອນ, ພັນທະສັນຍາ, ແລະ ພຣະບັນຍັດຂອງພຣະຜູ້ເປັນເຈົ້າທີ່ປະທານໃຫ້ໃນຍຸກສະໄໝນີ້.*

*1–7, ສຽງເຕືອນອອກໄປ ຫາຜູ້ຄົນທັງປວງ; 8–16, ການປະຖິ້ມຄວາມເຊື່ອ ແລະ ຄວາມຊົ່ວຮ້າຍເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງ; 17–23, ໂຈເຊັບ ສະມິດ ຖືກເອີ້ນໃຫ້ຟື້ນຟູຄວາມຈິງ ແລະ ອຳນາດຂອງພຣະຜູ້ເປັນເຈົ້າສູ່ແຜ່ນດິນໂລກ; 24–33, ພຣະຄຳພີມໍມອນໄດ້ຖືກນຳອອກມາ ແລະ ສາດສະໜາຈັກທີ່ແທ້ຈິງໄດ້ຖືກສະຖາປະນາຂຶ້ນ; 34–36, ສັນຕິສຸກຈະຖືກເອົາໄປຈາກແຜ່ນດິນໂລກ; 37–39, ຈົ່ງຄົ້ນຄວ້າພຣະບັນຍັດເຫລົ່ານີ້.*

1 ຈົ່ງເຊື່ອຟັງ, ໂອ້ ເຈົ້າຜູ້ຄົນແຫ່ງ [ກ]ສາດສະໜາຈັກຂອງເຮົາ, ສຸລະສຽງຂອງຜູ້ສະຖິດຢູ່ເບື້ອງບົນໄດ້ກ່າວ, ແລະ ຜູ້ທີ່ [ຂ]ພຣະເນດຈ້ອງມອງຢູ່ເທິງມະນຸດທັງປວງ; ແທ້ຈິງແລ້ວ, ຕາມຄວາມຈິງ ເຮົາກ່າວວ່າ: ຈົ່ງ [ຄ]ເຊື່ອຟັງ ເຈົ້າຜູ້ຄົນ ຈາກແດນໄກ; ແລະ ເຈົ້າຜູ້ຢູ່ເທິງເກາະໃນທະເລ, ຈົ່ງຟັງນຳກັນ.

2 ເພາະຕາມຄວາມຈິງ [ກ]ສຸລະສຽງຂອງພຣະຜູ້ເປັນເຈົ້າມາເຖິງມະນຸດທັງປວງ, ແລະ [ຂ]ບໍ່ມີໃຜໜີພົ້ນ; ແລະ ບໍ່ມີດວງຕາໃດທີ່ຈະຫລຽວບໍ່ເຫັນ, ທັງບໍ່ມີຫູໃດທີ່ຈະບໍ່ໄດ້ຍິນ, ທັງບໍ່ມີ [ຄ]ຫົວໃຈໃດທີ່ຈະບໍ່ຖືກແທງໃຫ້ທະລຸ.

3 ແລະ [ກ]ຄົນກະບົດ ຈະ ຖືກ ສຽບ ແທງດ້ວຍຄວາມໂສກເສົ້າຢ່າງຫລວງຫລາຍ; ເພາະ ຄວາມຊົ່ວ ຮ້າຍ ຂອງເຂົາຈະຖືກ [ຂ]ປ່າວປະກາດຢູ່ເທິງຫລັງຄາເຮືອນ, ແລະ ການເຮັດຄວາມລັບຂອງເຂົາຈະຖືກເປີດເຜີຍ.

4 ແລະ [ກ]ສຽງເຕືອນຈະມາເຖິງທຸກຜູ້ຄົນ, ໂດຍປາກຂອງສານຸສິດຂອງເຮົາ, ຜູ້ຊຶ່ງເຮົາເລືອກໄວ້ໃນ [ຂ]ຍຸກສຸດທ້າຍນີ້.

---

**1** 1 *ກ* 3 ນຟ 27:3; ຄພ 20:1. ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
*ຂ* ຄພ 38:7–8. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຄ* ພບຍ 32:1.
2 *ກ* ຄພ 133:16.
*ຂ* ຟລປ 2:9–11.
*ຄ* ຄມພ ໃຈ.
3 *ກ* ຄມພ ກະບົດ, ການກະບົດ.
*ຂ* ລກ 8:17; 12:3; 2 ນຟ 27:11; ມມ 5:8.
4 *ກ* ອຊກ 3:17–21; ຄພ 63:37. ຄມພ ເຕືອນ, ຄຳເຕືອນ; ວຽກງານເຜີຍແຜ່.
*ຂ* ຄມພ ຍຸກສຸດທ້າຍ.

5 ແລະ ເຂົາຈະອອກໄປ ແລະ ບໍ່ມີຄົນໃດ
ຈະສາມາດຢຸດຢັ້ງເຂົາໄດ້, ເພາະເຮົາພຣະ
ຜູ້ເປັນເຈົ້າໄດ້ບັນຊາເຂົາ.
6 ຈົ່ງເບິ່ງ, ນີ້ເປັນ [ກ]ສິດອຳນາດຂອງເຮົາ,
ແລະ ສິດອຳນາດຂອງຜູ້ຮັບໃຊ້ຂອງເຮົາ,
ແລະ ເປັນຄຳນຳຂອງເຮົາໃຫ້ແກ່ໜັງສືບັນ
ຍັດຂອງເຮົາ, ຊຶ່ງເຮົາໄດ້ມອບໃຫ້ເຂົາເພື່ອ
[ຂ]ພິມໃຫ້ແກ່ເຈົ້າ, ໂອ້ ຜູ້ອາໄສຂອງແຜ່ນດິນ
ໂລກ.
7 ດັ່ງນັ້ນ, ຈົ່ງ [ກ]ຢ້ານກົວ ແລະ ຕົວສັ່ນ,
ໂອ້ ເຈົ້າຜູ້ຄົນ, ເພາະສິ່ງໃດທີ່ເຮົາພຣະຜູ້
ເປັນເຈົ້າໄດ້ອອກຄຳສັ່ງ ສິ່ງນັ້ນຈະບັນລຸ
ຜົນ [ຂ]ສຳເລັດ.
8 ແລະ ຕາມຄວາມຈິງ ເຮົາກ່າວກັບເຈົ້າ
ວ່າ ເຂົາຜູ້ອອກໄປ, ນຳຂ່າວເຫລົ່ານີ້ໄປໃຫ້
ຜູ້ອາໄສຂອງແຜ່ນດິນໂລກ, ຕໍ່ເຂົາອຳນາດ
ຈະຖືກມອບໃຫ້ເພື່ອ [ກ]ຜະນຶກຄົນທີ່ບໍ່ເຊື່ອ
ແລະ [ຂ]ຄົນກະບົດ, ທັງເທິງແຜ່ນດິນໂລກ
ແລະ ໃນສະຫວັນ;
9 ແທ້ຈິງແລ້ວ, ຕາມຄວາມຈິງ, ເພື່ອຜະ
ນຶກເຂົາໄວ້ສຳລັບມື້ ເມື່ອ [ກ]ພຣະພິໂລດ
ຂອງພຣະເຈົ້າຈະຖອກເຫລົງມາເທິງ [ຂ]ຄົນ
ຊົ່ວຢ່າງບໍ່ມີກຳນົດ—
10 ໄວ້ສຳລັບ [ກ]ມື້ ເມື່ອພຣະຜູ້ເປັນເຈົ້າ
ຈະມາ [ຂ]ຊົດເຊີຍທຸກໆຄົນຕາມ [ຄ]ວຽກງານ
ຂອງເຂົາ, ແລະ ວັດແທກ ທຸກໆຄົນຕາມ
[ງ]ເຄື່ອງຜອງ ຊຶ່ງເຂົາໄດ້ໃຊ້ວັດແທກເພື່ອນ
ມະນຸດຂອງເຂົາ.
11 ດັ່ງນັ້ນ ສຸລະສຽງຂອງພຣະຜູ້ເປັນ
ເຈົ້າຈຶ່ງມາເຖິງທີ່ສຸດຂອງແຜ່ນດິນໂລກ,
ເພື່ອທຸກຄົນທີ່ຢາກໄດ້ຍິນ ກໍຈະໄດ້ຍິນ:
12 ຈົ່ງຕຽມ, ຈົ່ງຕຽມສຳລັບສິ່ງທີ່ຈະ
ມາເຖິງ, ເພາະພຣະຜູ້ເປັນເຈົ້າໃກ້ຈະມາ
ແລ້ວ;
13 ແລະ [ກ]ພຣະພິໂລດຂອງພຣະຜູ້ເປັນ
ເຈົ້າ ແມ່ນລຸກເປັນໄຟ, ແລະ [ຂ]ດາບຂອງ
ພຣະອົງຖືກຊະໂລມໄວ້ຢູ່ ໃນສະຫວັນ,
ແລະ ມັນຈະຕົກໃສ່ຜູ້ອາໄສຂອງແຜ່ນດິນ
ໂລກ.
14 ແລະ [ກ]ແຂນຂອງພຣະຜູ້ເປັນເຈົ້າຈະ
ເປີດອອກ; ແລະ ວັນນັ້ນຈະມາເຖິງ ເມື່ອຜູ້
ບໍ່ [ຂ]ຟັງສຸລະສຽງຂອງພຣະຜູ້ເປັນເຈົ້າ, ທັງ
ບໍ່ [ຄ]ຟັງສຽງຂອງຜູ້ຮັບໃຊ້ຂອງພຣະອົງ, ທັງ
ບໍ່ເອົາໃຈໃສ່ຕໍ່ຖ້ອຍຄຳຂອງສາດສະດາ
ແລະ ອັກຄະສາວົກ, ຈະຖືກ [ງ]ຕັດອອກຈາກ
ທ່າມກາງຜູ້ຄົນ;
15 ເພາະເຂົາໄດ້ [ກ]ໜີຈາກ [ຂ]ພິທີການ
ຂອງເຮົາ, ແລະ ໄດ້ [ຄ]ຝ່າຝືນ [ງ]ພັນທະສັນ
ຍາອັນເປັນນິດຂອງເຮົາ;
16 ເຂົາບໍ່ [ກ]ສະແຫວງຫາພຣະຜູ້ເປັນ
ເຈົ້າ ເພື່ອສະຖາປະນາຄວາມຊອບທຳຂອງ
ພຣະອົງ, ແຕ່ມະນຸດທຸກຄົນໄດ້ເດີນໄປໃນ

---

6 ກ ຄມພ ພຣະເຢຊູຄຣິດ—ສິດອຳນາດ.
ຂ ຄພ 72:21.
7 ກ ພບຍ 5:29; ປຍຈ 12:13.
ຂ ຄພ 1:38.
8 ກ ຄມພ ຜະນຶກ, ການຜະນຶກ.
ຂ ຄມພ ກະບົດ, ການກະບົດ.
9 ກ ພນມ 19:15–16; 1 ນຟ 22:16–17.
ຂ ມຊຢ 16:2; ຈສ—ມ 1:31, 55.
10 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຂ ອຊກ 7:4; ຄພ 56:19. ຄມພ ພຣະເຢຊູຄຣິດ—ພິພາກສາ.
ຄ ສພສ 24:12; ແອວ 9:28; 41:2–5; ຄພ 6:33.
ງ ມທ 7:2.
13 ກ ຄພ 63:6.
ຂ ອຊກ 21:3; ຄພ 35:14.
14 ກ ອຊຢ 53:1.
ຂ 2 ນຟ 9:31; ມຊຢ 26:28.
ຄ ຄພ 11:2.
ງ ກຈກ 3:23; ແອວ 50:20; ຄພ 50:8; 56:3.
15 ກ ຢຊ 23:16; ອຊຢ 24:5.
ຂ ຄມພ ພິທີການ.
ຄ ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
ງ ຄມພ ພັນທະສັນຍາໃໝ່ ແລະ ເປັນນິດ.
16 ກ ມທ 6:33.

[ຂ]ເສັ້ນທາງ [ຄ]ຂອງຕົນເອງ, ແລະ ຕາມ [ງ]ລັກ
ສະນະພຣະເຈົ້າຂອງຕົນເອງ, ຊຶ່ງລັກສະ
ນະນັ້ນ ເປັນຄືກັນກັບລັກສະນະຂອງໂລກ,
ແລະ ຊຶ່ງແກ່ນສານຂອງມັນເປັນຮູບບູຊາ,
ຊຶ່ງຈະ [ຈ]ເກົ່າລົງ ແລະ ຜຸພັງໄປໃນ [ສ]ບາບີ
ໂລນ, ແມ່ນແຕ່ບາບີໂລນທີ່ຍິ່ງໃຫຍ່ນັ້ນກໍ
ພັງທະລາຍ.
17 ດັ່ງນັ້ນ, ເຮົາພຣະຜູ້ເປັນເຈົ້າ, ໂດຍ
ທີ່ຮູ້ເຖິງຄວາມເສຍຫາຍທີ່ຈະມາສູ່ [ກ]ຜູ້ອາ
ໄສຂອງແຜ່ນດິນໂລກ, ຈຶ່ງໄດ້ເອີ້ນຜູ້ຮັບ
ໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ
ໄດ້ກ່າວກັບລາວຈາກສະຫວັນ, ແລະ ມອບ
ບັນຍັດໃຫ້ລາວ;
18 ແລະ ກໍໄດ້ມອບບັນຍັດໃຫ້ຄົນອື່ນໆ
ຄືກັນ, ເພື່ອພວກເຂົາຈະໄດ້ປະກາດສິ່ງ
ເຫລົ່ານີ້ແກ່ໂລກ; ແລະ ທັງໝົດນີ້ກໍເພື່ອ
ເລື່ອງນີ້ຈະບັນລຸຄວາມສຳເລັດ, ຊຶ່ງຖືກ
ຂຽນໄວ້ໂດຍສາດສະດາທັງຫລາຍ—
19 ສິ່ງທີ່ [ກ]ອ່ອນແອຂອງໂລກຈະອອກ
ມາ ແລະ ປາບຄົນທີ່ມີອຳນາດ ແລະ ມີອິດ
ທິພົນ, ເພື່ອມະນຸດຈະບໍ່ແນະນຳເພື່ອນ
ມະນຸດຂອງຕົນ, ທັງບໍ່ [ຂ]ໄວ້ວາງໃຈໃນແຂນ
ແຫ່ງເນື້ອໜັງ—
20 ແຕ່ວ່າທຸກໆຄົນອາດ [ກ]ກ່າວໃນພຣະ
ນາມຂອງພຣະເຈົ້າອົງເປັນພຣະຜູ້ເປັນ
ເຈົ້າ, ແມ່ນແຕ່ພຣະຜູ້ຊ່ວຍໃຫ້ລອດຂອງ
ໂລກ;
21 ພ້ອມນີ້ ເພື່ອສັດທາຈະໄດ້ເພີ່ມທະວີ
ຂຶ້ນໃນແຜ່ນດິນໂລກ;
22 ເພື່ອ [ກ]ພັນທະສັນຍາອັນເປັນນິດ
ຂອງເຮົາຈະໄດ້ຖືກສະຖາປະນາຂຶ້ນ;
23 ເພື່ອຄວາມສົມບູນ [ກ]ແຫ່ງພຣະກິດ
ຕິຄຸນຂອງເຮົາຈະຖືກ [ຂ]ປ່າວປະກາດໂດຍ
ຄົນທີ່ [ຄ]ອ່ອນແອ ແລະ ຄົນທີ່ຕ່ຳຕ້ອຍຈົນ
ເຖິງທີ່ສຸດຂອງໂລກ, ແລະ ຕໍ່ບັນດາກະສັດ
ແລະ ຜູ້ປົກຄອງ.
24 ຈົ່ງເບິ່ງ, ເຮົາຄືພຣະເຈົ້າ ແລະ ເຮົາ
ໄດ້ກ່າວມັນໄວ້ດັ່ງນີ້; [ກ]ບັນຍັດເຫລົ່ານີ້ເປັນ
ຂອງເຮົາ, ແລະ ໄດ້ມອບມັນໃຫ້ແກ່ຜູ້ຮັບ
ໃຊ້ຂອງເຮົາໃນຄວາມອ່ອນແອຂອງເຂົາ,
ຕາມລັກສະນະ [ຂ]ພາສາຂອງເຂົາ, ເພື່ອ
ເຂົາຈະ [ຄ]ເຂົ້າໃຈມັນ.
25 ແລະ ຕາບໃດທີ່ເຂົາຍັງເຮັດຜິດ ມັນ
ຈະຖືກເຮັດໃຫ້ເປັນທີ່ຮູ້ຈັກ;
26 ແລະ ຕາບໃດທີ່ເຂົາຍັງສະແຫວງຫາ
[ກ]ປັນຍາ ເຂົາຈະໄດ້ຮັບຄຳແນະນຳ;
27 ແລະ ຕາບໃດທີ່ເຂົາຍັງເຮັດບາບ
ເຂົາຈະຖືກ [ກ]ຕີສອນ, ເພື່ອວ່າເຂົາຈະໄດ້
[ຂ]ກັບໃຈ;
28 ແລະ ຕາບໃດທີ່ເຂົາຍັງ [ກ]ຖ່ອມຕົວ

16 ຂ ຄພ 82:6.
ຄ ອຊຢ 53:6.
ງ ອພຍ 20:4; 3 ນຟ 21:17. ຄມພ ການນັບຖືຮູບບູຊາ.
ຈ ອຊຢ 50:9.
ສ ຄພ 64:24; 133:14. ຄມພ ຄວາມເປັນຢູ່ທາງໂລກ; ບາເບນ, ບາບີໂລນ.
17 ກ ອຊຢ 24:1–6.
19 ກ ກຈກ 4:13; 1 ກຣທ 1:27; ຄພ 35:13; 133:58–59. ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
ຂ 2 ນຟ 28:31. ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
20 ກ ຄມພ ເປັນພະຍານ.
22 ກ ຄພ 39:11. ຄມພ ພັນທະສັນຍາ; ພັນທະສັນຍາໃໝ່ ແລະ ເປັນນິດ.
23 ກ ຄມພ ພຣະກິດຕິຄຸນ.
ຂ ຄມພ ວຽກງານເຜີຍແຜ່.
ຄ 1 ກຣທ 1:26–29.
24 ກ 2 ນຟ 33:10–11; ມຣນ 10:27–28.
ຂ 2 ນຟ 31:3; ອທ 12:39.
ຄ ຄພ 50:12. ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
26 ກ ຢກບ 1:5; ຄພ 42:68. ຄມພ ສະຕິປັນຍາ.
27 ກ ຄມພ ຕີສອນ, ການຕີສອນ.
ຂ ຄມພ ກັບໃຈ, ການກັບໃຈ.
28 ກ ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.

ເຂົາຈະຖືກເຮັດໃຫ້ເຂັ້ມແຂງຂຶ້ນ, ແລະ
ໄດ້ຮັບພອນຈາກເບື້ອງບົນ, ແລະ ໄດ້ຮັບ
[ຂ]ຄວາມຮູ້ເປັນບາງຄັ້ງ.
29 ແລະ ຫລັງຈາກໄດ້ຮັບບັນທຶກຂອງ
ຊາວນີໄຟ, ແທ້ຈິງແລ້ວ, ແມ່ນແຕ່ຜູ້ຮັບ
ໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຈະ
ມີອຳນາດທີ່ຈະແປ [ກ]ພຣະຄຳພີມໍມອນ
ຜ່ານຄວາມເມດຕາຂອງພຣະເຈົ້າ, ໂດຍ
ອຳນາດຂອງພຣະເຈົ້າ.
30 ແລະ ຄົນເຫລົ່ານັ້ນທີ່ໄດ້ຮັບບັນຍັດ
ເຫລົ່ານີ້ນຳອີກ, ຈະມີ [ກ]ອຳນາດທີ່ຈະວາງ
ຮາກຖານຂອງ [ຂ]ສາດສະໜາຈັກ, ແລະ ນຳ
[ຄ]ສາດສະໜາຈັກທີ່ແທ້ຈິງ ແລະ ດຳລົງຢູ່
ແຫ່ງດຽວເທົ່ານັ້ນຢູ່ເທິງແຜ່ນດິນໂລກອອກ
ຈາກການປິດບັງ ແລະ ອອກຈາກ [ງ]ຄວາມ
ມືດ, ຊຶ່ງເຮົາ, ພຣະຜູ້ເປັນເຈົ້າ, [ຈ]ພໍໃຈ
ຫລາຍ, ໂດຍກ່າວກັບສາດສະໜາຈັກເປັນ
ສ່ວນຣວມ ແລະ ບໍ່ ແມ່ນສະເພາະບຸກຄົນ—
31 ເພາະເຮົາ ພຣະຜູ້ເປັນເຈົ້າ ບໍ່ສາມາດ
ເບິ່ງ [ກ]ບາບດ້ວຍລະດັບການຍິນຍອມແມ່ນ
ແຕ່ໜ້ອຍທີ່ສຸດ;
32 ເຖິງຢ່າງໃດກໍຕາມ, ຄົນທີ່ກັບໃຈ
ແລະ ເຮັດຕາມພຣະບັນຍັດຂອງພຣະຜູ້
ເປັນເຈົ້າຈະໄດ້ຮັບ [ກ]ການໃຫ້ອະໄພ;
33 ແລະ ຄົນທີ່ບໍ່ [ກ]ກັບໃຈ, ຄວາມສະ
ຫວ່າງທີ່ເຂົາໄດ້ຮັບແລ້ວຈະຖືກ [ຂ]ເອົາໄປ
ຈາກເຂົາ; ເພາະ [ຄ]ວິນຍານຂອງເຮົາຈະບໍ່
[ງ]ພະຍາຍາມກັບມະນຸດສະເໝີໄປ, ຈອມ
ໂຍທາໄດ້ກ່າວ.
34 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ເຮົາກ່າວກັບເຈົ້າ ໂອ້ ຜູ້ອາໄສຂອງແຜ່ນ
ດິນໂລກວ່າ: ເຮົາພຣະຜູ້ເປັນເຈົ້າ ເຕັມໃຈ
ທີ່ຈະເຮັດໃຫ້ສິ່ງເຫລົ່ານີ້ເປັນທີ່ຮູ້ຈັກແກ່
ເນື້ອໜັງ [ກ]ທັງປວງ;
35 ເພາະເຮົາບໍ່ [ກ]ເລືອກໜ້າຄົນ, ແລະ
ປະສົງໃຫ້ມະນຸດທັງປວງຮູ້ວ່າ [ຂ]ມື້ນັ້ນຈະ
ມາເຖິງຢ່າງວ່ອງໄວ; ຍັງບໍ່ຮອດຊົ່ວໂມງນັ້ນ
ເທື່ອ, ແຕ່ໃກ້ຈະມາເຖິງແລ້ວ, ເມື່ອ [ຄ]ສັນ
ຕິສຸກຈະຖືກເອົາໄປຈາກແຜ່ນດິນໂລກ,
ແລະ [ງ]ມານຈະມີອຳນາດເໜືອທີ່ຄອບຄອງ
ຂອງມັນເອງ.
36 ແລະ ພຣະຜູ້ເປັນເຈົ້າຈະມີອຳນາດ
ເໜືອ [ກ]ໄພ່ພົນຂອງພຣະອົງຄືກັນ, ແລະ
ຈະ [ຂ]ປົກຄອງຢູ່ [ຄ]ທ່າມກາງພວກເຂົາ,
ແລະ ຈະລົງມາເພື່ອ [ງ]ພິພາກສາຢູ່ເທິງ [ຈ]ອີ
ດູມາຍ, ຫລື ໂລກ.
37 ຈົ່ງຄົ້ນຄວ້າ [ກ]ບັນຍັດເຫລົ່ານີ້, ເພາະ
ມັນເປັນຄວາມຈິງ ແລະ ຊື່ສັດ, ແລະ ຄຳທຳ

28 ຂ ຄມພ ຄວາມຮູ້.
29 ກ ຄມພ ພຣະຄຳພີມໍມອນ.
30 ກ ຄພ 1:4–5, 17–18.
ຂ ຄມພ ການຟື້ນຟູພຣະກິດຕິຄຸນ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.
ຄ ອຟຊ 4:5, 11–14. ຄມພ ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ.
ງ ຄມພ ຄວາມມືດທາງວິນຍານ.
ຈ ຄພ 38:10.
31 ກ ແອວ 45:16; ຄພ 24:2. ຄມພ ບາບ.
32 ກ ຄພ 58:42–43. ຄມພ ອະໄພ, ໃຫ້ອະໄພ.
33 ກ ມຊຢ 26:32.
ຂ ແອວ 24:30; ຄພ 60:2–3.
ຄ ຄມພ ພຣະວິນຍານບໍລິສຸດ.
ງ ປຖກ 6:3; 2 ນຟ 26:11; ມມ 5:16; ອທ 2:15; ມຣນ 9:4.
34 ກ ມທ 28:19; ຄພ 1:2; 42:58.
35 ກ ພບຢ 10:17; ກຈກ 10:34; ມຣນ 8:12; ຄພ 38:16.
ຂ ຄມພ ຍຸກສຸດທ້າຍ.
ຄ ຄພ 87:1–2. ຄມພ ເຄື່ອງໝາຍແຫ່ງການເວລາ; ສະຫງົບ, ຄວາມສະຫງົບ.
ງ ຄມພ ມານ.
36 ກ ຄມພ ໄພ່ພົນຂອງພຣະເຈົ້າ.
ຂ ຄມພ ພຣະເຢຊູຄຣິດ—ການປົກຄອງຂອງພຣະຄຣິດໃນລະຫວ່າງພັນປີ.
ຄ ຊກຢ 2:10–11; ຄພ 29:11; 84:118–119.
ງ ຄມພ ພິພາກສາ, ການພິພາກສາ, ຜູ້ພິພາກສາ.
ຈ ຄມພ ໂລກ.
37 ກ ຄມພ ພຣະຄຳພີ.

ນາຍ ແລະ [ຂ]ຄຳສັນຍາ ຊຶ່ງມີຢູ່ໃນນັ້ນຈະສຳເລັດຄົບຖ້ວນທັງໝົດ.

38 ສິ່ງ ທີ່ ເຮົາ ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວ, ເຮົາ ໄດ້ ກ່າວ, ແລະ ເຮົາ ບໍ່ ແກ້ ຕົວ; ແລະ ເຖິງແມ່ນຟ້າສະຫວັນ ແລະ ແຜ່ນດິນໂລກ ຈະສູນສິ້ນໄປ, [ກ]ຄຳຂອງເຮົາຈະບໍ່ສູນສິ້ນໄປ, ແຕ່ທຸກສິ່ງຈະ [ຂ]ເກີດເປັນຈິງ, ບໍ່ວ່າຈະເປັນໂດຍ [ຄ]ສຸງຂອງເຮົາເອງ ຫລື ໂດຍສຸງຂອງ [ງ]ຜູ້ຮັບໃຊ້ຂອງເຮົາ, ມັນກໍ [ຈ]ເໝືອນກັນ.

39 ເພາະ ຈົ່ງ ເບິ່ງ, ແລະ ເບິ່ງ ແມ, ພຣະ ຜູ້ ເປັນ ເຈົ້າ ຄື ພຣະ ເຈົ້າ, ແລະ [ກ]ພຣະ ວິນ ຍານ ໄດ້ ເປັນ ພະຍານ, ແລະ ພະຍານ ນັ້ນ ເປັນ ຄວາມ ຈິງ, ແລະ [ຂ]ຄວາມ ຈິງ ຈະ ດຳ ລົງຢູ່ຕະຫລອດການ ແລະ ຕະຫລອດໄປ. ອາແມນ.

## ພາກທີ 2

*ພາກສ່ວນໜຶ່ງທີ່ເອົາມາຈາກປະຫວັດສາດຂອງໂຈເຊັບ ສະມິດ ກ່ຽວກັບຖ້ອຍຄຳຂອງທູດໂມໂຣໄນທີ່ກ່າວຕໍ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນຂະນະທີ່ຢູ່ໃນບ້ານຂອງພໍ່ຂອງສາດສະດາ ທີ່ເມືອງແມນເຈດສະເຕີ, ລັດນິວຢອກ, ໃນຕອນແລງຂອງວັນທີ 21 ເດືອນກັນຍາ 1823. ໂມໂຣໄນເປັນນັກປະຫວັດສາດຄົນສຸດທ້າຍ ຜູ້ໄດ້ເຮັດການບັນທຶກ ຊຶ່ງບັດນີ້ມີຢູ່ຕໍ່ໜ້າຊາວໂລກ ນັ້ນຄືພຣະຄຳພີມໍມອນ. (ເບິ່ງໃສ່ກັບ ມາລາກີ 4:5–6; ເບິ່ງ ພາກທີ 27:9; 110:13–16; ແລະ 128:18 ນຳອີກ.)*

*1, ເອລີ ຢາ ຈະ ເປີດ ເຜີຍ ຖານະ ປະ ໂລ ຫິດ; 2–3, ຄຳ ສັນ ຍາ ຕໍ່ ບັນ ພະ ບຸ ລຸດ ຈະ ຖືກ ປູກ ຝັງ ໄວ້ ຢູ່ ໃນ ຫົວ ໃຈ ຂອງ ລູກ ຫລານ.*

1 ຈົ່ງເບິ່ງ, ເຮົາຈະເປີດເຜີຍຖານະປະໂລຫິດ ແກ່ເຈົ້າ, ໂດຍມືຂອງ [ກ]ເອລີຢາຜູ້ເປັນສາດ ສະດາ, ກ່ອນມື້ [ຂ]ອັນຍິ່ງໃຫຍ່ ແລະ ໜ້າຢ້ານກົວຂອງພຣະຜູ້ເປັນເຈົ້າຈະມາເຖິງ.

2 ແລະ [ກ]ເພິ່ນຈະປູກຝັງ [ຂ]ຄຳສັນຍາທີ່ໄດ້ເຮັດກັບພໍ່ໄວ້ໃນໃຈລູກ, ແລະ ໃຈລູກຈະຫັນໄປຫາພໍ່ຂອງເຂົາ.

3 ຖ້າບໍ່ ເປັນເຊັ່ນນັ້ນ, ທັງແຜ່ນດິນໂລກຈະຖືກທຳລາຍໃຫ້ໝົດສິ້ນໃນຕອນພຣະອົງສະເດັດມາ.

37 *ຂ* ຄພ 58:31; 62:6; 82:10.
38 *ກ* 2 ກສ 10:10; ມທ 5:18; 24:35; 2 ນຟ 9:16; ຈສ—ມ 1:35.
*ຂ* ຄພ 101:64.
*ຄ* ພບຍ 18:18; ຄພ 18:33–38; 21:5. ຄມພ ສຸງ; ເປີດເຜີຍ, ການເປີດເຜີຍ.
*ງ* ຄມພ ສາດສະດາ.
*ຈ* ຄມພ ການສະໜັບສະໜູນຜູ້ນຳຂອງສາດສະໜາຈັກ; ສິດອຳນາດ.
39 *ກ* 1 ຢຮ 5:6; ຄພ 20:27; 42:17.
*ຂ* ຄມພ ຈິງ, ຄວາມຈິງ.
**2** 1 *ກ* ມລກ 4:5–6; 3 ນຟ 25:5–6; ຄພ 110:13–15; 128:17; ຈສ—ປ 1:38–39. ຄມພ ຂໍກະແຈຂອງຖານະປະໂລຫິດ; ເອລີຢາ.
*ຂ* ຄພ 34:6–9; 43:17–26.
2 *ກ* ຄພ 27:9; 98:16–17.
*ຂ* ຄມພ ຄວາມລອດສຳລັບຄົນຕາຍ; ຜະນຶກ, ການຜະນຶກ.

# ພາກທີ 3

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຮາມໂມນີ, ລັດເພັນໂຊເວເນຍ, ເດືອນກໍລະກົດ 1828, ກ່ຽວກັບການສູນເສຍຕົ້ນສະບັບຂອງການແປສ່ວນທຳອິດຂອງພຣະຄຳພີມໍມອນ 116 ໜ້າ, ຊຶ່ງເອີ້ນວ່າ ໜັງສືລີໄຮ. ສາດສະດາໄດ້ຍິນຍອມໃຫ້ມາຕິນ ແຮຣິສ ເອົາການແປເຫລົ່ານັ້ນໄປຈາກການອາລັກຂາຂອງເພິ່ນດ້ວຍຄວາມລັງເລໃຈ, ຜູ້ໄດ້ຊ່ວຍເປັນຄົນຂຽນການແປຂອງພຣະຄຳພີມໍມອນໃຫ້ເພິ່ນຊົ່ວໄລຍະໜຶ່ງ. ການເປີດເຜີຍແມ່ນຖືກມອບໃຫ້ຜ່ານອຸລີມ ແລະ ທຸມມີມ. (ເບິ່ງ ພາກທີ 10.)*

*1–4, ວິທີທາງຂອງພຣະຜູ້ເປັນເຈົ້າເປັນໜຶ່ງຮອບນິລັນດອນ; 5–15, ໂຈເຊັບ ສະມິດ ຈະຕ້ອງກັບໃຈ ຖ້າບໍ່ດັ່ງນັ້ນ ຈະສູນເສຍຂອງປະທານແຫ່ງການແປ; 16–20, ພຣະຄຳພີມໍມອນອອກມາເພື່ອຊ່ວຍເຊື້ອສາຍຂອງລີໄຮໃຫ້ໄດ້ຮັບຄວາມລອດ.*

1 [ກ]ວຽກງານ, ແລະ ແຜນການ, ແລະ ຈຸດປະສົງຂອງພຣະເຈົ້າ ຈະລົ້ມເຫລວບໍ່ໄດ້, ທັງບໍ່ໄຮ້ປະໂຫຍດ.

2 ເພາະ [ກ]ພຣະເຈົ້າບໍ່ດຳເນີນໄປຕາມທາງຄົດ, ທັງພຣະອົງຈະບໍ່ລ້ຽວໄປທາງຂວາມື ຫລື ຊ້າຍ, ທັງພຣະອົງຈະບໍ່ປ່ຽນແປງຈາກສິ່ງທີ່ພຣະອົງໄດ້ກ່າວໄວ້, ສະນັ້ນທາງຂອງພຣະອົງຊື່ຕົງ, ແລະ [ຂ]ເສັ້ນທາງເດີນຂອງພຣະອົງຈຶ່ງເປັນໜຶ່ງຮອບນິລັນດອນ.

3 ຈົ່ງຈຳໄວ້, ຈຳໄວ້ວ່າ ບໍ່ແມ່ນ [ກ]ວຽກງານຂອງພຣະເຈົ້າທີ່ລົ້ມເຫລວ, ແຕ່ແມ່ນວຽກງານຂອງມະນຸດ;

4 ເພາະ ເຖິງ ແມ່ນ ວ່າ ມະນຸດ ອາດ ໄດ້ຮັບ ການ ເປີດ ເຜີຍ ຫລາຍ ຢ່າງ, ແລະ ມີອຳນາດທີ່ຈະເຮັດວຽກງານອັນຍິ່ງໃຫຍ່ຫລາຍຢ່າງ, ແຕ່ຖ້າຫາກເຂົາ [ກ]ອວດອ້າງໃນກຳລັງຂອງຕົນເອງ, ແລະ ຖືວ່າ [ຂ]ຄຳແນະນຳຂອງພຣະເຈົ້າໄຮ້ປະໂຫຍດ, ແລະເຮັດຕາມຄວາມປະສົງ ແລະ ຄວາມປາດຖະໜາອັນເປັນ [ຄ]ຕັນຫາຂອງຕົນແລ້ວ, ເຂົາຈະຕົກໄປ ແລະ ຈະນຳ [ງ]ການແກ້ແຄ້ນຂອງຄວາມຍຸດຕິທຳຂອງພຣະເຈົ້າມາສູ່ຕົນ.

5 ຈົ່ງເບິ່ງ, ສິ່ງເຫລົ່ານີ້ໄດ້ຖືກຝາກຝັງໄວ້ນຳເຈົ້າ, ແຕ່ບັນຍັດທີ່ເຈົ້າໄດ້ຮັບເຄັ່ງຄັດຫລາຍຂະໜາດໃດ; ແລະ ໃຫ້ຈື່ຈຳຄຳສັນຍາທີ່ໄດ້ເຮັດໄວ້ກັບເຈົ້ານຳອີກ, ຖ້າເຈົ້າບໍ່ໄດ້ລ່ວງລະເມີດມັນ.

6 ແລະ ຈົ່ງເບິ່ງ, ຈັກເທື່ອແລ້ວທີ່ເຈົ້າໄດ້ [ກ]ລ່ວງລະເມີດບັນຍັດ ແລະ ກົດຂອງພຣະເຈົ້າ, ແລະ ໄດ້ເຮັດຕາມ [ຂ]ການຊັກຊວນຂອງມະນຸດຕໍ່ໄປ.

---

**3** 1*ກ* ພສສ 8:3–9; ຄພ 10:43.
2*ກ* ແອວ 7:20. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* 1 ນຟ 10:18–19; ຄພ 35:1.
3*ກ* ກຈກ 5:38–39; ມມ 8:22; ຄພ 10:43.
4*ກ* ຄພ 84:73. ຄມພ ຈອງຫອງ, ຄວາມຈອງຫອງ.
*ຂ* ຢຄ 4:10; ແອວ 37:37. ຄມພ ຄຳແນະນຳ; ພຣະບັນຍັດຂອງພຣະເຈົ້າ.
*ຄ* ຄມພ ກາມມະລົມ.
*ງ* ຄມພ ແກ້ແຄ້ນ, ການແກ້ແຄ້ນ.
6*ກ* ຄພ 5:21; ຈສ—ປ 1:28–29.
*ຂ* ຄພ 45:29; 46:7.

7 ເພາະ, ຈົ່ງເບິ່ງ, ເຈົ້າບໍ່ຄວນ [ກ]ຢ້ານກົວ
ມະນຸດຫລາຍກວ່າພຣະເຈົ້າ. ເຖິງແມ່ນວ່າ
ມະນຸດຈະຖືວ່າຄຳແນະນຳຂອງພຣະເຈົ້າ
ໄຮ້ປະໂຫຍດ, ແລະ [ຂ]ດູຖູກພຣະຄຳຂອງ
ພຣະອົງ—
8 ແຕ່ເຈົ້າຄວນຈະຊື່ສັດ; ແລະ ພຣະອົງ
ຄົງຈະເດ່ແຂນຂອງພຣະອົງອອກມາ ແລະ
ຄ້ຳຈູນເຈົ້າຕ້ານທານກັບ [ກ]ລູກສອນໄຟທັງ
ປວງຂອງ [ຂ]ຄູ່ຕໍ່ສູ້; ແລະ ພຣະອົງຄົງຈະຢູ່
ນຳເຈົ້າໃນ [ຄ]ຄວາມທຸກຮ້ອນ ທຸກເທື່ອ.
9 ຈົ່ງເບິ່ງ, ເຈົ້າຄືໂຈເຊັບ, ແລະ ເຈົ້າໄດ້
ຖືກເລືອກໃຫ້ເຮັດວຽກງານຂອງພຣະຜູ້
ເປັນເຈົ້າ, ແຕ່ເປັນເພາະການລ່ວງລະເມີດ,
ຖ້າເຈົ້າບໍ່ລະວັງ ເຈົ້າຈະຕົກໄປ.
10 ແຕ່ ຈົ່ງຈຳໄວ້ວ່າ ພຣະເຈົ້າມີເມດ
ຕາ; ສະນັ້ນ, ຈົ່ງກັບໃຈຈາກສິ່ງທີ່ເຈົ້າໄດ້
ເຮັດຜ່ານມາ ຊຶ່ງກົງກັນຂ້າມກັບບັນຍັດ ຊຶ່ງ
ເຮົາໄດ້ມອບໃຫ້ແກ່ເຈົ້າ, ແລະ ເຈົ້າຍັງຖືກ
ເລືອກ, ແລະ ເຈົ້າຖືກເອີ້ນໃຫ້ເຮັດວຽກງານ
ຄືນອີກ;
11 ຍົກເວັ້ນແຕ່ເຈົ້າຈະເຮັດສິ່ງນີ້, ເຈົ້າ
ຈະຖືກປ່ອຍໄປ ແລະ ເປັນເໝືອນດັ່ງຄົນ
ອື່ນໆ, ແລະ ບໍ່ມີຂອງປະທານອີກຕໍ່ໄປ.
12 ແລະ ເມື່ອເຈົ້າປ່ອຍການຫລຽວເຫັນ
ແລະ ອຳນາດທີ່ຈະ [ກ]ແປ ຊຶ່ງພຣະເຈົ້າ
ປະທານໃຫ້ເຈົ້າໄປ ກໍເທົ່າກັບວ່າເຈົ້າໄດ້
ປ່ອຍໃຫ້ສິ່ງສັກສິດຕົກຢູ່ໃນມືຂອງ [ຂ]ຄົນ
ຊົ່ວ,
13 ຜູ້ຖືວ່າຄຳແນະນຳຂອງພຣະເຈົ້າ
ໄຮ້ປະໂຫຍດ, ແລະ ເຮັດຜິດຄຳສັນຍາທີ່
ສັກສິດທີ່ສຸດ ຊຶ່ງໄດ້ເຮັດຢູ່ຕໍ່ພຣະພັກຂອງ
ພຣະເຈົ້າ, ແລະ ໄດ້ເພິ່ງການຕັດສິນຂອງ
ຕົນເອງ ແລະ ໄດ້ [ກ]ອວດອ້າງໃນປັນຍາ
ຂອງຕົນເອງ.
14 ແລະ ນີ້ຄືເຫດຜົນທີ່ເຈົ້າໄດ້ສູນເສຍ
ສິດທິພິເສດຂອງເຈົ້າໄປເປັນໄລຍະໜຶ່ງ—
15 ເພາະເຈົ້າໄດ້ຍອມໃຫ້ຄຳແນະນຳ
ຂອງ [ກ]ຜູ້ນຳພາຂອງເຈົ້າຖືກຢຽບຍ່ຳຕັ້ງແຕ່
ຕົ້ນ.
16 ເຖິງຢ່າງໃດກໍຕາມ, ວຽກງານຂອງ
ເຮົາຈະດຳເນີນໄປໜ້າ, ເພາະຕາບໃດທີ່
ຄວາມຮູ້ເລື່ອງ [ກ]ພຣະຜູ້ຊ່ວຍໃຫ້ລອດອົງ
ໜຶ່ງໄດ້ມາສູ່ໂລກຜ່ານ [ຂ]ປະຈັກພະຍານ
ຂອງຊາວຢິວສັນໃດ, [ຄ]ຄວາມຮູ້ເລື່ອງພຣະ
ຜູ້ຊ່ວຍໃຫ້ລອດອົງໜຶ່ງຈະມາສູ່ຜູ້ຄົນຂອງ
ເຮົາສັນນັ້ນ—
17 ແລະ ມາສູ່ [ກ]ຊາວນີໄຟ, ແລະ ຊາວ
ຢາໂຄບ, ແລະ ຊາວໂຢເຊັບ, ແລະ ຊາວ
ໂຊຣຳ, ຜ່ານປະຈັກພະຍານຂອງບັນພະບຸ
ລຸດຂອງເຂົາ—
18 ແລະ [ກ]ປະຈັກພະຍານນີ້ຈະມາສູ່
ຄວາມຮູ້ຂອງ [ຂ]ຊາວເລມັນ, ແລະ ຊາວເລມູ
ເອນ, ແລະ ຊາວອິດຊະມາເອນ, ຜູ້ [ຄ]ເສື່ອມ
ໂຊມຢູ່ໃນຄວາມບໍ່ເຊື່ອຖື ເພາະຄວາມຊົ່ວ
ຮ້າຍຂອງບັນພະບຸລຸດຂອງເຂົາ, ຜູ້ຊຶ່ງພຣະ
ຜູ້ເປັນເຈົ້າຍອມໃຫ້ [ງ]ທຳລາຍຊາວນີໄຟພີ່
ນ້ອງຂອງເຂົາ, ເພາະຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງຂອງເຂົາ.

---

7 *ກ* ພສສ 27:1; ລກ 9:26; ຄພ 122:9. ຄມພ ກ້າຫານ, ຄວາມກ້າຫານ, ຢ່າງກ້າຫານ; ຢ້ານກົວ, ຄວາມຢ້ານກົວ.
*ຂ* ລລວ 26:42–43; 1 ນຟ 19:7; ຢຄ 4:8–10.
8 *ກ* ອຟຊ 6:16; 1 ນຟ 15:24; ຄພ 27:17.
*ຂ* ຄມພ ມານ.
*ຄ* ແອວ 38:5.
12 *ກ* ຄພ 1:29; 5:4.
*ຂ* ຄພ 10:6–8.
13 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
15 *ກ* ອສ ພຣະຜູ້ເປັນເຈົ້າ.
16 *ກ* ຄມພ ພຣະຜູ້ຊ່ວຍໃຫ້ລອດ.
*ຂ* 1 ນຟ 13:23–25; 2 ນຟ 29:4–6.
*ຄ* ມຊຢ 3:20.
17 *ກ* 2 ນຟ 5:8–9.
18 *ກ* ຄມພ ພຣະຄຳພີມໍມອນ.
*ຂ* 2 ນຟ 5:14; ອນ 1:13–18.
*ຄ* 2 ນຟ 26:15–16.
*ງ* ມມ 8:2–3.

19 ແລະ ເພາະ [ກ]ຈຸດປະສົງນີ້ [ຂ]ແຜ່ນ
ຈາລຶກເຫລົ່ານີ້ຈຶ່ງຖືກຮັກສາໄວ້, ຊຶ່ງບັນ
ຈຸບັນທຶກເຫລົ່ານີ້—ເພື່ອວ່າ [ຄ]ຄຳສັນຍາ
ຂອງພຣະຜູ້ເປັນເຈົ້າຈະສຳເລັດຄົບຖ້ວນ,
ຊຶ່ງພຣະອົງໄດ້ເຮັດໄວ້ກັບຜູ້ຄົນຂອງ
ພຣະອົງ;
20 ແລະ ເພື່ອ ວ່າ [ກ]ຊາວ ເລມັນ ຈະ ມີ
ຄວາມຮູ້ເລື່ອງບັນພະບຸລຸດຂອງເຂົາ, ແລະ
ເພື່ອວ່າເຂົາຈະຮູ້ກ່ຽວກັບ ຄຳສັນຍາຂອງ
ພຣະຜູ້ເປັນເຈົ້າ, ແລະ ເພື່ອວ່າເຂົາຈະ
[ຂ]ເຊື່ອພຣະກິດຕິຄຸນ ແລະ [ຄ]ເພິ່ງອາໄສ
ພຣະຄຸນຄວາມດີຂອງພຣະເຢຊູຄຣິດ,
ແລະ [ງ]ຮຸ່ງເຫລື້ອມຜ່ານສັດທາໃນພຣະ
ນາມຂອງພຣະອົງ, ແລະ ເພື່ອວ່າ ຜ່ານ
ການກັບໃຈ ເຂົາຈະໄດ້ຮັບການຊ່ວຍໃຫ້
ລອດ. ອາແມນ.

# ພາກທີ 4

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ພໍ່ຂອງເພິ່ນ, ໂຈເຊັບ ສະມິດ ຜູ້ພໍ່, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນກຸມພາ 1829.*

*1–4, ການຮັບໃຊ້ຢ່າງກ້າຫານຊ່ວຍເຫລືອຜູ້ປະຕິບັດງານຂອງພຣະຜູ້ເປັນເຈົ້າ; 5–6, ຄຸນລັກສະນະຢ່າງພຣະເຈົ້າເຮັດໃຫ້ເຂົາເຈົ້າເໝາະສົມຕໍ່ການປະຕິບັດສາດສະໜາກິດ; 7, ຕ້ອງສະແຫວງຫາສິ່ງທີ່ກ່ຽວຂ້ອງກັບພຣະເຈົ້າ.*

1 ບັດ ນີ້ ຈົ່ງ ເບິ່ງ, [ກ]ວຽກ ງານ ອັນ ໜ້າ
ອັດສະຈັນພວມຈະອອກມາສູ່ລູກຫລານ
ມະນຸດ.
2 ສະນັ້ນ, ໂອ້ ເຈົ້າຜູ້ເລີ່ມຕົ້ນໃນ [ກ]ການ
ຮັບໃຊ້ພຣະເຈົ້າ, ຈົ່ງເບິ່ງວ່າເຈົ້າ [ຂ]ຮັບໃຊ້
ພຣະອົງດ້ວຍສຸດ [ຄ]ໃຈ, ພະລັງ, ຄວາມນຶກ
ຄິດ, ແລະ ກຳລັງຂອງເຈົ້າ, ເພື່ອວ່າເຈົ້າຈະ
ຢືນຢ່າງ [ງ]ບໍ່ມີຂໍ້ຕຳນິຕໍ່ພຣະພັກຂອງພຣະ
ເຈົ້າໃນວັນສຸດທ້າຍ.
3 ສະນັ້ນ, ຖ້າເຈົ້າມີຄວາມປາດຖະໜາທີ່
ຈະຮັບໃຊ້ພຣະເຈົ້າ ເຈົ້າກໍໄດ້ຖືກ [ກ]ເອີ້ນໃຫ້
ມາຫາວຽກງານ;
4 ເພາະຈົ່ງເບິ່ງ [ກ]ທົ່ງກໍຂາວພ້ອມແລ້ວທີ່
ຈະ [ຂ]ເກັບກ່ຽວ; ແລະ ເບິ່ງແມ, ຄົນໃດທີ່ຍື່ນ
ກ່ຽວຂອງເຂົາມາດ້ວຍເຫື່ອແຮງ, ຄົນໆນັ້ນ
ຈະ [ຄ]ສະສົມມັນໄວ້ເພື່ອເຂົາຈະບໍ່ພິນາດ,
ແຕ່ຈະນຳຄວາມລອດມາສູ່ຈິດວິນຍານ
ຂອງຕົນ;
5 ແລະ [ກ]ສັດທາ, [ຂ]ຄວາມຫວັງ, [ຄ]ຄວາມ

---

19 *ກ* 1 ນຟ 9:3, 5.
*ຂ* ຄມພ ແຜ່ນຈາລຶກຄຳ.
*ຄ* 3 ນຟ 5:14–15;
ຄພ 10:46–50.
20 *ກ* 2 ນຟ 30:3–6;
ຄພ 28:8; 49:24.
*ຂ* ມມ 3:19–21.
*ຄ* 2 ນຟ 31:19; ມຣນ 6:4.
*ງ* ມຣນ 7:26, 38.
**4** 1 *ກ* ອຊຢ 29:14;
1 ນຟ 14:7; 22:8;
ຄພ 6:1; 18:44.
ຄມພ ການຟື້ນຟູ
ພຣະກິດຕິຄຸນ.
2 *ກ* ຄມພ ຮັບໃຊ້, ການຮັບໃຊ້.
*ຂ* ຢຊ 22:5; 1 ຊມອ 7:3;
ຄພ 20:19; 76:5.
*ຄ* ຄມພ ຈິດໃຈ;
ໃຈ.
*ງ* 1 ກຣທ 1:8; ຢຄ 1:19;
3 ນຟ 27:20.
3 *ກ* ຄພ 11:4, 15; 36:5; 63:57.
ຄມພ ເອີ້ນ, ການ
ເອີ້ນ, ຖືກເອີ້ນຈາກ
ພຣະເຈົ້າ, ຕຳແໜ່ງ.
4 *ກ* ຢຮ 4:35;
ແອວ 26:3–5;
ຄພ 11:3; 33:3, 7.
*ຂ* ຄມພ ເກັບກ່ຽວ.
*ຄ* 1 ຕມທ 6:19.
5 *ກ* ຄມພ ສັດທາ.
*ຂ* ຄມພ ຫວັງ, ຄວາມຫວັງ.
*ຄ* ຄມພ ໃຈບຸນ, ຄວາມໃຈບຸນ.

ໃຈ ບຸນ ແລະ [ງ]ຄວາມ ຮັກ, ເພາະການ ທີ່
[ຈ]ເຫັນແກ່ [ສ]ລັດສະໝີພາບຂອງພຣະເຈົ້າ
ແຕ່ຢ່າງດຽວ, ຍ່ອມເຮັດໃຫ້ເຂົາເໝາະສົມ
ກັບວຽກງານ.
6 ຈົ່ງຈື່ຈຳສັດທາ, [ກ]ຄຸນນະທຳ, ຄວາມຮູ້,
ຄວາມຢັບຢັ້ງຕົນ, [ຂ]ຄວາມອົດທົນ, ຄວາມ
ກະລຸນາສັນອ້າຍນ້ອງ, ຄວາມເປັນເໝືອນ
ພຣະເຈົ້າ, ຄວາມໃຈບຸນ, [ຄ]ຄວາມຖ່ອມຕົວ,
[ງ]ຄວາມພາກພຽນ.
7 ຈົ່ງ [ກ]ໝັ່ນຂໍ, ແລ້ວເຈົ້າຈະໄດ້ຮັບ; ໝັ່ນ
ເຄາະ, ແລ້ວຈະມີຜູ້ໄຂປະຕູໃຫ້. ອາແມນ.

# ພາກທີ 5

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນມີນາ 1829, ຕາມຄຳຂໍຮ້ອງຂອງມາຕິນ ແຮຣິສ.*

*1–10, ຄົນລຸ້ນນີ້ ຈະໄດ້ຮັບພຣະຄຳຂອງພຣະຜູ້ເປັນເຈົ້າຜ່ານໂຈເຊັບ ສະມິດ; 11–18, ພະຍານສາມຄົນຈະເປັນພະຍານເຖິງພຣະຄຳພີມໍມອນ; 19–20, ພຣະຄຳຂອງພຣະຜູ້ເປັນເຈົ້າຈະຖືກພິສູດດັ່ງເມື່ອກ່ອນ; 21–35, ມາຕິນ ແຮຣິສ ອາດກັບໃຈ ແລະ ເປັນພະຍານຄົນໜຶ່ງ.*

1 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ດັ່ງທີ່ຜູ້
ຮັບໃຊ້ຂອງເຮົາ [ກ]ມາຕິນ ແຮຣິສ ມີຄວາມ
ປາດຖະໜາການເປັນພະຍານຈາກມືຂອງ
ເຮົາ, ວ່າເຈົ້າ, ຜູ້ຮັບໃຊ້ຂອງເຮົາໂຈເຊັບ
ສະມິດ, ຜູ້ລູກ, ມີ [ຂ]ແຜ່ນຈາລຶກ ຊຶ່ງເຈົ້າໄດ້
ເປັນພະຍານ ແລະ ກ່າວພະຍານວ່າເຈົ້າ
ໄດ້ຮັບມັນຈາກເຮົາ;
2 ແລະ ບັດນີ້, ຈົ່ງເບິ່ງ, ໃຫ້ເຈົ້າກ່າວສິ່ງ
ນີ້ແກ່ລາວ—ພຣະອົງຜູ້ໄດ້ກ່າວແກ່ເຈົ້າ,
ກ່າວແກ່ເຈົ້າວ່າ: ເຮົາພຣະຜູ້ເປັນເຈົ້າ, ຄື
ພຣະເຈົ້າ, ແລະ ໄດ້ມອບສິ່ງເຫລົ່ານີ້ແກ່
ເຈົ້າ, ຜູ້ຮັບໃຊ້ຂອງເຮົາໂຈເຊັບ ສະມິດ,
ຜູ້ລູກ, ແລະ ໄດ້ບັນຊາເຈົ້າວ່າ ເຈົ້າຄວນ
ຢືນ [ກ]ເປັນພະຍານເຖິງສິ່ງເຫລົ່ານີ້;
3 ແລະ ເຮົາເຮັດໃຫ້ເຈົ້າ ເພື່ອເຈົ້າຈະ
ເຂົ້າເຮັດພັນທະສັນຍາກັບເຮົາ, ເພື່ອເຈົ້າ
ຈະບໍ່ສະແດງມັນ ຍົກເວັ້ນແຕ່ກັບຄົນເຫລົ່າ
ນັ້ນ [ກ]ຜູ້ຊຶ່ງເຮົາໄດ້ບັນຊາເຈົ້າໃຫ້ເຮັດ; ແລະ
ເຈົ້າບໍ່ມີ [ຂ]ອຳນາດເໜືອມັນ ຍົກເວັ້ນແຕ່ເຮົາ
ມອບມັນ ໃຫ້ເຈົ້າ.
4 ແລະ ເຈົ້າມີຂອງປະທານເພື່ອແປແຜ່ນ
ຈາລຶກ; ແລະ ສິ່ງນີ້ເປັນຂອງປະທານຢ່າງ
ທຳອິດທີ່ເຮົາໄດ້ມອບໃຫ້ເຈົ້າ; ແລະ ເຮົາ
ໄດ້ບັນຊາວ່າ ເຈົ້າບໍ່ຄວນອ້າງເຖິງຂອງ

---

5 *ງ* ຄມພ ຮັກ, ຄວາມຮັກ.
*ຈ* ພສສ 141:8; ມທ 6:22; ມມ 8:15.
*ສ* ຄມພ ລັດສະໝີພາບ.
6 *ກ* ຄມພ ຄຸນນະທຳ.
*ຂ* ຄມພ ອົດທົນ, ຄວາມອົດທົນ.
*ຄ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ງ* ຄມພ ພາກພຽນ, ຄວາມພາກພຽນ.
7 *ກ* ມທ 7:7–8; 2 ນຟ 32:4. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

**5** 1 *ກ* ຄພ 5:23–24; ຈສ—ປ 1:61.
*ຂ* ຄມພ ແຜ່ນຈາລຶກຄຳ.
2 *ກ* ຄມພ ພະຍານ.
3 *ກ* 2 ນຟ 27:13. ເບິ່ງ "ປະຈັກພະຍານຂອງພະຍານສາມຄົນ" ແລະ "ປະຈັກພະຍານຂອງພະຍານແປດຄົນ" ນຳອີກ ໃນພາກໜ້າຕົ້ນຂອງພຣະຄຳພີມໍມອນ.
*ຂ* 2 ນຟ 3:11.

ປະທານອື່ນໃດຈົນກວ່າຈຸດປະສົງຂອງເຮົາ
ຈະສຳເລັດກ່ຽວກັບເລື່ອງນີ້; ເພາະເຮົາຈະ
ບໍ່ມອບຂອງປະທານອື່ນໃຫ້ເຈົ້າຈົນກວ່າ
ວຽກງານນີ້ສຳເລັດ.
5 ຕາມຄວາມຈິງແລ້ວ, ເຮົາກ່າວກັບເຈົ້າ
ວ່າ ວິບັດຈະມາເຖິງຜູ້ອາໄສຂອງແຜ່ນດິນ
ໂລກ ຖ້າເຂົາຈະ [ກ]ບໍ່ເຊື່ອຟັງຄຳຂອງເຮົາ;
6 ເພາະຫລັງຈາກນີ້ ເຈົ້າຈະຖືກ [ກ]ແຕ່ງ
ຕັ້ງ ແລະ ອອກໄປ ແລະ ກ່າວ [ຂ]ຄຳຂອງ
ເຮົາແກ່ລູກຫລານມະນຸດ.
7 ຈົ່ງເບິ່ງ, ຖ້າເຂົາຈະບໍ່ [ກ]ເຊື່ອຄຳຂອງ
ເຮົາ, ເຂົາຈະບໍ່ເຊື່ອເຈົ້າ, ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ, ເຖິງແມ່ນຖ້າເປັນໄປໄດ້ທີ່ເຈົ້າຈະ
ສາມາດສະແດງໃຫ້ເຂົາເຫັນສິ່ງເຫລົ່ານີ້ທັງ
ໝົດ ຊຶ່ງເຮົາໄດ້ມອບໃຫ້ແກ່ເຈົ້າ.
8 ໂອ້, ຄົນລຸ້ນນີ້ທີ່ [ກ]ບໍ່ເຊື່ອ ແລະ [ຂ]ແຂງ
ຄໍ—ພຣະພິໂລດຂອງເຮົາໄດ້ເກີດກັບເຂົາ
ແລ້ວ.
9 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບເຈົ້າວ່າ ເຮົາໄດ້ [ກ]ສະຫງວນສິ່ງຊຶ່ງເຮົາ
ໄດ້ຝາກຝັງໄວ້ນຳເຈົ້າ, ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ, ເພື່ອຈຸດປະສົງທີ່ສະຫລາດໃນ
ເຮົາ, ແລະ ມັນຈະຖືກເຮັດໃຫ້ເປັນທີ່ຮູ້ຈັກ
ແກ່ຄົນລຸ້ນຫລັງ;
10 ແຕ່ ຄົນລຸ້ນນີ້ ຈະໄດ້ຮັບຄຳຂອງເຮົາ
ຜ່ານເຈົ້າ;
11 ແລະ ນອກ ເໜືອ ໄປ ຈາກ [ກ]ປະຈັກ
ພະຍານຂອງ ເຈົ້າແລ້ວ, ປະຈັກ ພະຍານ
ຂອງອີກສາມຄົນຂອງຜູ້ຮັບໃຊ້ຂອງເຮົາ, ຜູ້
ຊຶ່ງເຮົາຈະເອີ້ນ ແລະ ແຕ່ງຕັ້ງ, ຜູ້ຊຶ່ງເຮົາຈະ
ສະແດງສິ່ງເຫລົ່ານີ້ແກ່ເຂົາ, ແລະ ເຂົາຈະ
ອອກໄປ ດ້ວຍຄຳຂອງເຮົາທີ່ມອບໃຫ້ຜ່ານ
ເຈົ້າ.
12 ແທ້ຈິງແລ້ວ, ເຂົາຈະຮູ້ແນ່ນອນວ່າ
ສິ່ງເຫລົ່ານີ້ເປັນຄວາມຈິງ, ເພາະຈາກຟ້າ
ສະຫວັນເຮົາຈະປະກາດມັນແກ່ເຂົາ.
13 ເຮົາຈະມອບອຳນາດໃຫ້ເຂົາ ເພື່ອ
ເຂົາຈະໄດ້ເຫັນ ແລະ ເບິ່ງສິ່ງເຫລົ່ານີ້ດັ່ງທີ່
ມັນເປັນຢູ່;
14 ແລະ [ກ]ບໍ່ ມີ ໃຜ ອີກ ທີ່ ເຮົາ ຈະ ມອບ
ອຳນາດນີ້ໃຫ້, ທີ່ຈະໄດ້ຮັບປະຈັກພະຍານ
ຢ່າງດຽວກັນນີ້ໃນບັນດາຄົນລຸ້ນນີ້, ໃນ
ຕອນເລີ່ມຕົ້ນໃໝ່ ແລະ ຕອນ [ຂ]ສາດສະ
ໜາຈັກຂອງເຮົາອອກມາຈາກຖິ່ນແຫ້ງ
ແລ້ງກັນດານ—ແຈ່ມແຈ້ງດັ່ງ [ຄ]ດວງເດືອນ,
ແລະ ງົດງາມດັ່ງດວງຕາເວັນ, ແລະ ເປັນ
ໜ້າຢ້ານກົວດັ່ງກອງທັບມາພ້ອມກັບທຸງ.
15 ແລະ ດ້ວຍປະຈັກພະຍານຂອງ
[ກ]ພະຍານສາມຄົນ ເຮົາຈະສົ່ງຄຳຂອງເຮົາ
ອອກໄປ.
16 ແລະ ຈົ່ງເບິ່ງ, ຜູ້ໃດກໍຕາມທີ່ [ກ]ເຊື່ອ
ໃນ ຄຳ ຂອງເຮົາ, ເຮົາຈະ ໄປ [ຂ]ຢ້ຽມ ຢາມ
ເຂົາດ້ວຍ [ຄ]ການສະແດງໃຫ້ປະຈັກໂດຍ
[ງ]ພຣະວິນຍານຂອງເຮົາ; ແລະ ເຂົາຈະໄດ້

5 ກ ຢມຢ 26:4–5; ແອວ 5:37–38; ຄພ 1:14.
6 ກ ຄພ 20:2–3. ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
ຂ 2 ນຟ 29:7.
7 ກ ລກ 16:27–31; ຄພ 63:7–12.
8 ກ ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
ຂ ມມ 8:33. ຄມພ ຈອງຫອງ, ຄວາມຈອງຫອງ.
9 ກ ແອວ 37:18.
11 ກ 2 ນຟ 27:12; ອທ 5:3–4; ຄພ 17:1–5.
14 ກ 2 ນຟ 27:13.
ຂ ຄມພ ການຟື້ນຟູພຣະກິດຕິຄຸນ; ສາດສະໜາຈັກຂອງພຣະເຢຊູຄຣິດ.
ຄ ຄພ 105:31; 109:73.
15 ກ ຄພ 17. ຄມພ ພະຍານຂອງພຣະຄຳພີມໍມອນ.
16 ກ ອທ 4:11.
ຂ 1 ນຟ 2:16.
ຄ ຄພ 8:1–3.
ງ ຄມພ ພຣະວິນຍານບໍລິສຸດ.

[ຈ]ເກີດ ຈາກເຮົາ, ແມ່ນແຕ່ດ້ວຍນ້ຳ ແລະ
ດ້ວຍພຣະວິນຍານ—
17 ແລະ ເຈົ້າຕ້ອງລໍຖ້າໄປຊົ່ວໄລຍະໜຶ່ງ,
ເພາະເຈົ້າຍັງບໍ່ໄດ້ຖືກ [ກ]ແຕ່ງຕັ້ງເທື່ອ—
18 ແລະ ປະຈັກພະຍານ ຂອງ ເຂົາຈະ
ອອກໄປ ຄື ກັນ ເພື່ອ [ກ]ກ່າວ ໂທດ ຄົນລຸ້ນ
ນີ້ ຖ້າເຂົາເຮັດໃຈແຂງກະດ້າງຕໍ່ຕ້ານສິ່ງ
ເຫລົ່ານີ້;
19 ເພາະ [ກ]ໄມ້ແສ້ແຫ່ງການກວາດລ້າງ
ຈະອອກໄປ ໃນບັນດາຜູ້ອາໄສຂອງແຜ່ນ
ດິນໂລກ, ແລະ ຈະສືບຕໍ່ ຊ້ຽນຕີເປັນບາງ
ຄັ້ງ, ຖ້າເຂົາ [ຂ]ບໍ່ກັບໃຈ, ຈົນກວ່າແຜ່ນດິນ
ໂລກຈະ [ຄ]ເປົ່າແປນ, ແລະ ຜູ້ອາໄສຢູ່ໃນ
ນັ້ນຈິບຫາຍ ແລະ ຖືກທຳລາຍຈົນໝົດສິ້ນ
ເພາະຄວາມແຈ້ງສະຫວ່າງຂອງ [ງ]ການມາ
ຂອງເຮົາ.
20 ຈົ່ງເບິ່ງ, ເຮົາບອກເລື່ອງເຫລົ່ານີ້ກັບ
ເຈົ້າ, ແມ່ນແຕ່ດັ່ງທີ່ເຮົາໄດ້ [ກ]ບອກຜູ້ຄົນ
ເຖິງຄວາມພິນາດຂອງເຢຣູຊາເລັມນັ້ນ;
ແລະ [ຂ]ຄຳຂອງເຮົາຈະຖືກພິສູດໃນວັນ
ເວລານີ້ ດັ່ງທີ່ມັນໄດ້ຖືກພິສູດຜ່ານມາຈົນ
ເຖິງບັດນີ້.
21 ແລະ ບັດນີ້ ເຮົາບັນຊາເຈົ້າ, ຜູ້ຮັບ
ໃຊ້ຂອງເຮົາໂຈເຊັບ, ເພື່ອໃຫ້ກັບໃຈ ແລະ
ເດີນໄປຢ່າງຊື່ຕົງຫລາຍຂຶ້ນຕໍ່ໜ້າເຮົາ,
ແລະ ຢ່າຍອມຕໍ່ການຊັກຊວນຂອງມະນຸດ
ອີກຕໍ່ໄປ;
22 ແລະ ວ່າເຈົ້າຈະຍຶດໝັ້ນໃນ [ກ]ການ
ຮັກສາບັນຍັດ ຊຶ່ງເຮົາໄດ້ບັນຊາເຈົ້າ; ແລະ
ຖ້າເຈົ້າເຮັດສິ່ງນີ້, ຈົ່ງເບິ່ງ ເຮົາຈະປະທານ
ຊີວິດນິລັນດອນໃຫ້ແກ່ເຈົ້າ, ເຖິງແມ່ນເຈົ້າ
ຈະຖືກ [ຂ]ຂ້າ.
23 ແລະ ບັດນີ້, ອີກເທື່ອໜຶ່ງ, ເຮົາກ່າວ
ກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ກ່ຽວ
ກັບ [ກ]ຊາຍ ຄົນທີ່ປາດຖະໜາ ການ ເປັນ
ພະຍານ—
24 ຈົ່ງເບິ່ງ, ເຮົາກ່າວ ແກ່ລາວວ່າ ລາວ
ໄດ້ຍົກຕົວເອງຂຶ້ນ ແລະ ບໍ່ຖ່ອມຕົວພຽງ
ພໍຢູ່ຕໍ່ໜ້າເຮົາ; ແຕ່ຖ້າ ລາວກົ້ມຂາບລົງຕໍ່
ໜ້າເຮົາ, ແລະ ຖ່ອມຕົວໃນຄຳອະທິຖານ
ແລະ ໃນສັດທາທີ່ມີພະລັງ, ດ້ວຍນ້ຳໃສໃຈ
ຈິງຂອງລາວແລ້ວ, ຈາກນັ້ນ ເຮົາຈະອະນຸ
ຍາດໃຫ້ລາວ [ກ]ເຫັນສິ່ງທີ່ລາວປາດຖະໜາ
ຢາກຈະເຫັນ.
25 ແລະ ຈາກນັ້ນ ລາວຈະກ່າວກັບຜູ້ຄົນ
ຂອງຄົນລຸ້ນນີ້ວ່າ: ຈົ່ງເບິ່ງ, ເຮົາໄດ້ເຫັນສິ່ງ
ຊຶ່ງພຣະຜູ້ເປັນເຈົ້າ ໄດ້ສະແດງແກ່ໂຈເຊັບ
ສະມິດ, ຜູ້ລູກ, ແລະ ເຮົາ [ກ]ຮູ້ຢ່າງແນ່ນອນ
ວ່າມັນເປັນຄວາມຈິງ, ເພາະເຮົາໄດ້ເຫັນ
ມັນ, ເພາະມັນໄດ້ຖືກສະແດງໃຫ້ເຮົາເຫັນ
ໂດຍອຳນາດຂອງພຣະເຈົ້າ ແລະ ບໍ່ແມ່ນ
ຂອງມະນຸດ.
26 ແລະ ເຮົາ ພຣະ ຜູ້ ເປັນ ເຈົ້າ ບັນ ຊາ
ລາວ, ມາຕິນ ແຮຣິສ ຜູ້ຮັບໃຊ້ຂອງເຮົາ, ວ່າ

16 ຈ ຄມພ ເກີດໃໝ່, ເກີດຈາກ
ພຣະເຈົ້າ;
ຂອງປະທານແຫ່ງພຣະວິນ
ຍານບໍລິສຸດ;
ບັບຕິສະມາ, ໃຫ້
ບັບຕິສະມາ.
17 ກ ຄມພ ສິດອຳນາດ;
ແຕ່ງຕັ້ງ, ການແຕ່ງຕັ້ງ.
18 ກ 1 ນຟ 14:7;
ຄພ 20:13–15.
19 ກ ຄພ 29:8; 35:11;
43:17–27.
ຄມພ ເຄື່ອງໝາຍແຫ່ງການ
ເວລາ;
ຍຸກສຸດທ້າຍ.
ຂ ຄມພ ກັບໃຈ, ການກັບໃຈ.
ຄ ອຊຢ 24:1, 5–6.
ງ ອຊຢ 66:15–16;
ຄພ 133:41.
ຄມພ ການສະເດັດມາຄັ້ງທີ
ສອງຂອງພຣະເຢຊູຄຣິດ.
20 ກ 1 ນຟ 1:18; 2 ນຟ 25:9.
ຂ ຄພ 1:38.
22 ກ ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.
ຂ ແອວ 60:13;
ຄພ 6:30; 135.
23 ກ ຄພ 5:1.
24 ກ ເບິ່ງ “ປະຈັກພະຍານ
ຂອງພະຍານສາມຄົນ”
ໃນພາກໜ້າຕົ້ນຂອງ
ພຣະຄຳພີມໍມອນ.
25 ກ ອທ 5:3.

ລາວຈະບໍ່ກ່າວສິ່ງໃດກັບພວກເຂົາກ່ຽວກັບ
ສິ່ງເຫລົ່ານີ້, ນອກຈາກລາວຈະກ່າວວ່າ:
ເຮົາໄດ້ເຫັນມັນ, ແລະ ມັນໄດ້ຖືກສະແດງ
ໃຫ້ເຮົາເຫັນໂດຍອຳນາດຂອງພຣະເຈົ້າ;
ແລະ ນີ້ຄືຖ້ອຍຄຳຊຶ່ງລາວຈະກ່າວ.
27 ແຕ່ຖ້າລາວປະຕິເສດສິ່ງນີ້ ລາວ
ຈະຝ່າຝືນພັນທະສັນຍາ ຊຶ່ງລາວໄດ້ເຮັດ
ພັນທະສັນຍາກັບເຮົາມາກ່ອນ, ແລະ ຈົ່ງ
ເບິ່ງ, ລາວຈະຖືກກ່າວໂທດ.
28 ແລະ ບັດນີ້, ຍົກເວັ້ນແຕ່ລາວຈະ
ຖ່ອມຕົວ ແລະ ຍອມຮັບກັບເຮົາເຖິງສິ່ງທີ່
ລາວໄດ້ເຮັດຜິດໄປນັ້ນ, ແລະ ເຮັດພັນທະ
ສັນຍາກັບເຮົາວ່າ ລາວຈະຮັກສາບັນຍັດ
ຂອງເຮົາ, ແລະ ໃຊ້ສັດທາໃນເຮົາ, ຈົ່ງເບິ່ງ,
ເຮົາກ່າວແກ່ລາວ, ລາວຈະບໍ່ມີການມອງ
ເຫັນເຊັ່ນນັ້ນ, ເພາະເຮົາຈະບໍ່ໃຫ້ລາວເຫັນ
ສິ່ງທີ່ເຮົາໄດ້ກ່າວໄວ້.
29 ແລະ ຖ້າຫາກເປັນເຊັ່ນນີ້, ເຮົາບັນຊາ
ເຈົ້າ, ຜູ້ຮັບໃຊ້ຂອງເຮົາໂຈເຊັບ, ວ່າເຈົ້າຈະ
ກ່າວກັບລາວ, ວ່າ ລາວຈະບໍ່ເຮັດອີກ, ທັງບໍ່
ລົບກວນເຮົາອີກກ່ຽວກັບເລື່ອງນີ້.
30 ແລະ ຖ້າຫາກເປັນເຊັ່ນນັ້ນ, ຈົ່ງເບິ່ງ,
ເຮົາກ່າວກັບເຈົ້າໂຈເຊັບ, ເມື່ອເຈົ້າແປໄດ້
ຕື່ມອີກໜ້ອຍໜຶ່ງ ໃຫ້ເຈົ້າຢຸດຊົ່ວໄລຍະ
ໜຶ່ງ, ແມ່ນແຕ່ຈົນກວ່າເຮົາຈະບັນຊາເຈົ້າ
ອີກ; ຈາກນັ້ນເຈົ້າຈຶ່ງແປຕື່ມອີກ.
31 ແລະ ຍົກເວັ້ນແຕ່ເຈົ້າຈະເຮັດສິ່ງນີ້,
ຈົ່ງເບິ່ງ, ເຈົ້າຈະບໍ່ມີຂອງປະທານອີກຕໍ່ໄປ,
ແລະ ເຮົາຈະເອົາສິ່ງຊຶ່ງເຮົາໄດ້ຝາກຝັງໄວ້
ນຳເຈົ້າໄປຈາກເຈົ້າ.
32 ແລະ ບັດນີ້, ເພາະເຮົາເຫັນລ່ວງໜ້າ
ເຖິງການຊຸມຕົວລໍຖ້າ ເພື່ອທຳລາຍເຈົ້າ,
ແທ້ຈິງແລ້ວ, ເຮົາເຫັນລ່ວງໜ້າວ່າ ຖ້າ
ມາຕິນ ແຮຣິສ ຜູ້ຮັບໃຊ້ຂອງເຮົາບໍ່ຖ່ອມ
ຕົວ ແລະ ຮັບການເປັນພະຍານຈາກມື
ຂອງເຮົາ, ແລ້ວລາວຈະຕົກໄປສູ່ການລ່ວງ
ລະເມີດ;
33 ແລະ ມີຫລາຍຄົນຊຸມຕົວລໍຖ້າ [ກ]ທຳ
ລາຍເຈົ້າຢູ່ໃຫ້ສິ້ນໄປຈາກຜືນແຜ່ນດິນ
ໂລກ; ແລະ ດ້ວຍເຫດນີ້, ວັນເວລາຂອງ
ເຈົ້າຈຶ່ງຖືກຕໍ່ອອກໄປ, ເຮົາໄດ້ມອບຄຳບັນ
ຊາເຫລົ່ານີ້ແກ່ເຈົ້າ.
34 ແທ້ຈິງແລ້ວ, ດ້ວຍເຫດນີ້ ເຮົາຈຶ່ງໄດ້
ກ່າວວ່າ: ຢຸດ, ແລະ ຢືນຢູ່ຊື່ໆ ຈົນກວ່າເຮົາ
ບັນຊາເຈົ້າ, ແລະ ເຮົາຈະ [ກ]ຈັດຫາວິທີ ຊຶ່ງ
ໂດຍວິທີນັ້ນ ເຈົ້າຈະສຳເລັດສິ່ງທີ່ເຮົາໄດ້
ບັນຊາເຈົ້າ.
35 ແລະ ຖ້າເຈົ້າ [ກ]ຊື່ສັດໃນການຮັກສາ
ບັນຍັດຂອງເຮົາ, ເຈົ້າຈະຖືກ [ຂ]ຍົກຂຶ້ນໃນ
ວັນສຸດທ້າຍ. ອາແມນ.

## ພາກທີ 6

*ການເປີດເຜີຍທີ່ມອບໃຫ້ແກ່ ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ອໍລີເວີ ຄາວເດີຣີ, ທີ່ເມືອງຮາມໂມນີ ລັດເພັນໄຊເວເນຍ, ເດືອນເມສາ 1829. ອໍລີເວີ ຄາວເດີຣີ ໄດ້ເລີ່ມຕົ້ນວຽກງານຂອງລາວໃນການເປັນຜູ້ຂຽນການແປຂອງພຣະຄຳພີມໍມອນ, ວັນທີ 7 ເດືອນ*

33 *ກ* ຄພ 10:6; 38:13, 28.
34 *ກ* 1 ນຟ 3:7.
35 *ກ* ອພຍ 15:26;
ຄພ 11:20.
*ຂ* ຢຮ 6:39–40;
1 ທສນ 4:17;
3 ນຟ 15:1;
ຄພ 9:14; 17:8; 75:16, 22.

*ເມສາ 1829. ລາວໄດ້ຮັບການສະແດງໃຫ້ປະຈັກຈາກສະຫວັນເຖິງຄວາມຈິງຂອງປະຈັກພະຍານຂອງ ສາດສະດາກ່ຽວກັບແຜ່ນຈາລຶກ ຊຶ່ງເທິງນັ້ນພຣະຄຳພີມໍມອນຖືກບັນທຶກໄວ້. ສາດສະດາໄດ້ທູນຖາມ ພຣະຜູ້ເປັນເຈົ້າຜ່ານອູລິມ ແລະ ທຸມມີມ ແລະ ໄດ້ຮັບຄຳຕອບນີ້.*

*1–6, ຜູ້ທຳງານຢູ່ໃນທົ່ງຂອງພຣະຜູ້ເປັນເຈົ້າຈະ ໄດ້ຮັບ ຄວາມລອດ; 7–13, ບໍ່ມີຂອງປະທານໃດທີ່ຍິ່ງໃຫຍ່ໄປກວ່າຂອງປະທານແຫ່ງຄວາມລອດ; 14–27, ການເປັນພະຍານ ເຖິງຄວາມ ຈິງມາເຖິງ ໂດຍອຳນາດຂອງພຣະວິນຍານ; 28–37, ຈົ່ງເບິ່ງທີ່ພຣະຄຣິດ, ແລະ ເຮັດຄວາມດີເລື້ອຍໄປ.*

1 [ກ]ວຽກ ງານ ອັນ ຍິ່ງ ໃຫຍ່ ແລະ ໜ້າ
ອັດສະຈັນພວມຈະອອກມາສູ່ລູກຫລານ
ມະນຸດ.
2 ຈົ່ງເບິ່ງ, ເຮົາຄືພຣະເຈົ້າ; ຈົ່ງເອົາໃຈໃສ່
ຕໍ່ [ກ]ຄຳຂອງເຮົາ, ຊຶ່ງມີຊີວິດ ແລະ ມີພະລັງ,
[ຂ]ແຫລມຄົມຫລາຍກວ່າດາບສອງຄົມ, ຊຶ່ງ
ຈະແຍກທັງຂໍ້ຕໍ່ ແລະ ໄຂໃນກະດູກອອກ
ຈາກກັນ; ສະນັ້ນຈົ່ງເອົາໃຈໃສ່ຕໍ່ຄຳຂອງ
ເຮົາ.
3 ຈົ່ງເບິ່ງ, [ກ]ທົ່ງກໍຂາວພ້ອມແລ້ວທີ່ຈະ
ເກັບກ່ຽວ; ສະນັ້ນ, ຜູ້ໃດພ້ອມແລ້ວທີ່ຈະ
ເກັບກ່ຽວ, ກໍໃຫ້ເຂົາເດ່ກ່ຽວຂອງເຂົາອອກ
ໄປດ້ວຍສຸດພະລັງຂອງເຂົາ, ແລະ ເກັບ
ກ່ຽວໃນຂະນະທີ່ຍັງເວັນຢູ່, ເພື່ອເຂົາຈະ
ໄດ້ສະສົມຄວາມລອດອັນເປັນນິດໄວ້ໃຫ້
ແກ່ຈິດວິນຍານຂອງເຂົາໃນອານາຈັກຂອງ
ພຣະເຈົ້າ.
4 ແທ້ຈິງແລ້ວ, ຄົນໃດກໍຕາມທີ່ຈະ [ກ]ເດ່
ກ່ຽວຂອງຕົນອອກໄປ ແລະ ເກັບກ່ຽວ,
ຄົນໆນັ້ນແມ່ນຖືກເອີ້ນ ຈາກພຣະເຈົ້າ.
5 ສະນັ້ນ, ຖ້າຫາກເຈົ້າ [ກ]ໝັ່ນຂໍຈາກເຮົາ
ເຈົ້າກໍຈະໄດ້ຮັບ; ຖ້າເຈົ້າໝັ່ນເຄາະ ແລ້ວ
ຈະມີຜູ້ໄຂປະຕູໃຫ້ເຈົ້າ.
6 ບັດນີ້, ດັ່ງທີ່ເຈົ້າໄດ້ຂໍ, ຈົ່ງເບິ່ງ, ເຮົາ
ກ່າວກັບເຈົ້າວ່າ ຈົ່ງຮັກສາບັນຍັດຂອງເຮົາ,
ແລະ [ກ]ສະແຫວງຫາ ທີ່ຈະນຳ ແລະ ສະຖາ
ປະນາອຸດົມການຂອງ [ຂ]ຊີໂອນ;
7 [ກ]ຢ່າສະແຫວງຫາ [ຂ]ຄວາມຮັ່ງມີ ແຕ່
ຈົ່ງສະແຫວງຫາ [ຄ]ປັນຍາ, ແລະ ຈົ່ງເບິ່ງ,
[ງ]ຄວາມລຶກລັບຂອງພຣະເຈົ້າ ຈະເປີດອອກ
ແກ່ເຈົ້າ, ແລະ ຈາກນັ້ນຈະເຮັດໃຫ້ເຈົ້າຮັ່ງ
ມີ. ຈົ່ງເບິ່ງ, ຄົນທີ່ມີ [ຈ]ຊີວິດນິລັນດອນເປັນ
ຄົນຮັ່ງມີ.
8 ຕາມ ຈິງ, ຕາມ ຈິງ ແລ້ວ, ເຮົາ ກ່າວ
ກັບເຈົ້າ, ແມ່ນແຕ່ເຈົ້າປາດຖະໜາຈາກ
ເຮົາສັນໃດ ມັນຈະເປັນໄປກັບເຈົ້າສັນ
ນັ້ນ; ແລະ ຖ້າຫາກເຈົ້າປາດຖະໜາ, ເຈົ້າ
ຈະເປັນທາງແຫ່ງການເຮັດຄວາມດີຢ່າງ
ຫລວງຫລາຍໃນຄົນລຸ້ນນີ້.

**6** 1 *ກ* ອຊຢ 29:14; ຄພ 4; 18:44.
2 *ກ* ຮຣ 4:12; ພນມ 1:16; ຄພ 27:1.
*ຂ* ຮລມ 3:29; ຄພ 33:1.
3 *ກ* ຢຮ 4:35; ຄພ 31:4; 33:3; 101:64.
4 *ກ* ພນມ 14:15–19; ແອວ 26:5; ຄພ 11:3–4, 27.
5 *ກ* ມທ 7:7–8.
6 *ກ* 1 ນຟ 13:37.
*ຂ* ຄມພ ຊີໂອນ.
7 *ກ* ແອວ 39:14; ຄພ 68:31.
*ຂ* 1 ກສ 3:10–13; ມທ 19:23; ຢຄ 2:18–19. ຄມພ ຄວາມເປັນຢູ່ທາງໂລກ; ຮັ່ງມີ, ຄວາມຮັ່ງມີ.
*ຄ* ຄມພ ສະຕິປັນຍາ.
*ງ* ຄພ 42:61, 65. ຄມພ ຄວາມລຶກລັບຂອງພຣະເຈົ້າ.
*ຈ* ຄພ 14:7.

9 ຢ່າກ່າວສິ່ງໃດນອກຈາກ [ກ]ການກັບໃຈ
ແກ່ຄົນລຸ້ນນີ້; ຈົ່ງຮັກສາບັນຍັດຂອງເຮົາ,
ແລະ ຊ່ວຍນຳ ວຽກງານຂອງເຮົາອອກມາ,
ຕາມບັນຍັດຂອງເຮົາ, ແລະ ເຈົ້າຈະໄດ້ຮັບ
ພອນ.
10 ຈົ່ງ ເບິ່ງ ເຈົ້າ ມີ ຂອງ ປະທານ, ແລະ
ເຈົ້າເປັນສຸກແລ້ວ ເພາະຂອງປະທານຂອງ
ເຈົ້າ. ຈົ່ງຈື່ຈຳໄວ້ວ່າ ມັນ [ກ]ສັກສິດ ແລະ ມາ
ຈາກເບື້ອງເທິງ—
11 ແລະ ຖ້າ ຫາກ ເຈົ້າ ຈະ [ກ]ທູນ ຖາມ,
ເຈົ້າຈະຮູ້ [ຂ]ຄວາມລຶກລັບ ຊຶ່ງຍິ່ງໃຫຍ່ ແລະ
ໜ້າອັດສະຈັນ; ສະນັ້ນ ເຈົ້າຈະ ໃຊ້ ຂອງ
[ຄ]ປະທານຂອງເຈົ້າ, ເພື່ອເຈົ້າຈະພົບຄວາມ
ລຶກລັບ, ເພື່ອເຈົ້າຈະນຳຫລາຍຄົນມາສູ່
ຄວາມຮູ້ ເລື່ອງຄວາມຈິງ, ແທ້ຈິງແລ້ວ,
ເຮັດໃຫ້ເຂົາ [ງ]ຍອມຮັບຄວາມຜິດຂອງວິທີ
ທາງຂອງເຂົາ.
12 ຢ່າ ບອກ ໃຫ້ ຜູ້ ໃດ ຮູ້ ກ່ຽວ ກັບ ຂອງ
ປະທານຂອງເຈົ້າ ຍົກເວັ້ນແຕ່ຜູ້ທີ່ມີຄວາມ
ເຊື່ອດຽວກັນກັບເຈົ້າ. ຢ່າເຮັດຫລິ້ນໆກັບ
ສິ່ງທີ່ [ກ]ສັກສິດ.
13 ຖ້າເຈົ້າເຮັດຄວາມດີ, ແທ້ຈິງແລ້ວ,
ແລະ [ກ]ຍຶດໝັ້ນໃນ [ຂ]ຄວາມຊື່ສັດຈົນເຖິງ
[ຄ]ທີ່ສຸດ, ແລ້ວເຈົ້າຈະໄດ້ຮັບຄວາມລອດ
ໃນ ອານາ ຈັກ ຂອງພຣະເຈົ້າ, ຊຶ່ງ ເປັນ
ຂອງປະທານອັນຍິ່ງໃຫຍ່ທີ່ສຸດໃນຂອງ
ປະທານທັງໝົດຂອງພຣະເຈົ້າ; ເພາະບໍ່ມີ
ຂອງປະທານໃດທີ່ຍິ່ງໃຫຍ່ໄປກວ່າຂອງ
ປະທານແຫ່ງ [ງ]ຄວາມລອດ.
14 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ເຈົ້າເປັນສຸກແລ້ວເພາະສິ່ງທີ່ເຈົ້າໄດ້
ເຮັດ; ເພາະເຈົ້າໄດ້ [ກ]ທູນຖາມເຮົາ, ແລະ
ຈົ່ງເບິ່ງ, ສ່ວນຫລາຍ ເມື່ອເຈົ້າທູນຖາມ
ເຮົາ ເຈົ້າກໍໄດ້ຮັບຄຳແນະນຳ ຈາກພຣະ
ວິນຍານຂອງເຮົາ. ຖ້າຫາກບໍ່ເປັນເຊັ່ນນັ້ນ,
ເຈົ້າຄົງບໍ່ໄດ້ມາຫາບ່ອນທີ່ເຈົ້າໄດ້ຢູ່ໃນ
ຕອນນີ້ເລີຍ.
15 ຈົ່ງ ເບິ່ງ, ເຈົ້າ ຮູ້ ວ່າ ເຈົ້າ ໄດ້ ທູນ ຖາມ
ເຮົາ ແລະ ເຮົາກໍໄດ້ໃຫ້ຄວາມສະຫວ່າງແກ່
[ກ]ຈິດໃຈຂອງເຈົ້າ; ແລະ ບັດນີ້ ເຮົາບອກສິ່ງ
ເຫລົ່ານີ້ແກ່ເຈົ້າ ເພື່ອວ່າເຈົ້າຈະຮູ້ວ່າ ເຈົ້າ
ໄດ້ຮັບຄວາມສະຫວ່າງໂດຍພຣະວິນຍານ
ແຫ່ງຄວາມຈິງ;
16 ແທ້ຈິງແລ້ວ, ເຮົາບອກເຈົ້າວ່າ ບໍ່ມີ
ຄົນໃດເລີຍນອກຈາກພຣະເຈົ້າທີ່ [ກ]ຮູ້ຈັກ
ຄວາມນຶກຄິດຂອງເຈົ້າ ແລະ ຄວາມເຈດ
ຕະນາຂອງ [ຂ]ໃຈເຈົ້າ.
17 ເຮົາ ບອກ ສິ່ງ ເຫລົ່າ ນີ້ ເພື່ອ ເປັນ
ພະຍານແກ່ເຈົ້າ—ວ່າຖ້ອຍຄຳ ຫລື ວຽກ
ງານ ຊຶ່ງ ເຈົ້າພວມ ຂຽນຢູ່ຕອນນີ້ເປັນ
[ກ]ຄວາມຈິງ.
18 ສະນັ້ນ ຈົ່ງ [ກ]ພາກ ພຽນ; [ຂ]ຢືນ ຄຽງ
ຂ້າງ ໃຈເຊັບຜູ້ຮັບໃຊ້ຂອງເຮົາຢ່າງຊື່
ສັດ, ໃນສະຖານະການຫຍຸ້ງຍາກໃດໆ

9 ກ ແອວ 29:9;
ຄພ 15:6; 18:14–15; 34:6.
ຄມພ ກັບໃຈ, ການກັບໃຈ;
ວຽກງານເຜີຍແຜ່.
10 ກ ຄພ 63:64.
11 ກ ຄພ 102:23;
ຈສ—ປ 1:18, 26.
ຂ ມທ 11:25; 13:10–11;
ແອວ 12:9.
ຄ ຄມພ ຂອງປະທານ;
ຂອງປະທານແຫ່ງ
ພຣະວິນຍານ.
ງ ຢກບ 5:20; ແອວ 62:45;
ຄພ 18:44.
12 ກ ມທ 7:6.
13 ກ 1 ນຟ 15:24.
ຂ ມຊຢ 2:41; ອທ 4:19;
ຄພ 51:19; 63:47.
ຄ ຄມພ ອົດທົນ,
ຄວາມອົດທົນ.
ງ ຄມພ ລອດ, ຄວາມລອດ.
14 ກ ຄມພ ອະທິຖານ, ການອະ
ທິຖານ, ຄຳອະທິຖານ.
15 ກ ຄມພ ຈິດໃຈ.
16 ກ 1 ຂຄ 28:9; ມທ 12:25;
ຮຣ 4:12; ມຊຢ 24:12;
3 ນຟ 28:6.
ຄມພ ຮອບຮູ້ທຸກຢ່າງ.
ຂ 1 ກສ 8:39.
17 ກ ຄພ 18:2.
18 ກ ຄມພ ພາກພຽນ,
ຄວາມພາກພຽນ.
ຂ ຄພ 124:95–96.

ກໍ ຕາມ ທີ່ ລາວ ຈະ ຢູ່ ເພື່ອ ເຫັນ ແກ່ ພຣະ
ຄຳ.
19 ໃຫ້ຕັກເຕືອນລາວໃນຄວາມຜິດຂອງ
ລາວ, ແລະ ໃຫ້ຮັບການຕັກເຕືອນຈາກ
ລາວນຳອີກ. ຈົ່ງອົດທົນ; ຈົ່ງມີສະຕິ; ຈົ່ງ
ຢັບຢັ້ງຕົນ; ໃຫ້ມີຄວາມອົດທົນ, ສັດທາ,
ຄວາມຫວັງ, ແລະ ຄວາມໃຈບຸນ.
20 ຈົ່ງເບິ່ງ, ເຈົ້າຄືອໍລິເວີ, ແລະ ເຮົາໄດ້
ກ່າວກັບເຈົ້າເພາະຄວາມປາດຖະໜາຂອງ
ເຈົ້າ; ສະນັ້ນ ຈົ່ງ [ກ]ສະສົມຄຳເຫລົ່ານີ້ໄວ້
ໃນໃຈຂອງເຈົ້າ. ຈົ່ງຊື່ສັດ ແລະ ພາກພຽນ
ໃນການຮັກສາພຣະບັນຍັດຂອງພຣະເຈົ້າ,
ແລະ ເຮົາຈະອ້ອມເຈົ້າໄວ້ໃນອ້ອມແຂນ
ແຫ່ງຄວາມຮັກຂອງເຮົາ.
21 ຈົ່ງ ເບິ່ງ, ເຮົາ ຄື ພຣະ ເຢຊູ ຄຣິດ,
[ກ]ພຣະບຸດຂອງພຣະເຈົ້າ. ເຮົາຄືຜູ້ດຽວກັນ
ນັ້ນທີ່ໄດ້ມາຫາຜູ້ຄົນຂອງເຮົາ, ແລະ ຜູ້
ຄົນ [ຂ]ຂອງເຮົາເອງບໍ່ໄດ້ຮັບເອົາເຮົາ. ເຮົາ
ເປັນ [ຄ]ຄວາມສະຫວ່າງຊຶ່ງສ່ອງແສງຢູ່ໃນ
[ງ]ຄວາມມືດ, ແລະ ຄວາມມືດບໍ່ເຂົ້າໃຈມັນ
ເລີຍ.
22 ຕາມ ຈິງ, ຕາມຈິງ ແລ້ວ, ເຮົາ ກ່າວ
ກັບ ເຈົ້າ, ຖ້າເຈົ້າປາດຖະໜາການເປັນ
ພະຍານຕື່ມອີກ, ໃຫ້ເຈົ້ານຶກເຖິງຄືນທີ່ເຈົ້າ
ໄດ້ເອີ້ນຫາເຮົາຢູ່ໃນໃຈຂອງເຈົ້າ, ເພື່ອວ່າ
ເຈົ້າຈະ [ກ]ຮູ້ກ່ຽວກັບຄວາມຈິງຂອງສິ່ງເຫລົ່າ
ນີ້.
23 ເຮົາບໍ່ໄດ້ກ່າວ ໃຫ້ [ກ]ຄວາມ ສະຫງົບ
ແກ່ ຈິດ ໃຈ ຂອງ ເຈົ້າ ບໍ ກ່ຽວກັບ ເລື່ອງນີ້?
ເຈົ້າຈະມີ [ຂ]ພະຍານໃດທີ່ຍິ່ງໃຫຍ່ໄປກວ່າ
ພະຍານຈາກພຣະເຈົ້າ?
24 ແລະ ບັດນີ້, ຈົ່ງເບິ່ງ, ເຈົ້າໄດ້ຮັບການ
ເປັນພະຍານແລ້ວ; ເພາະຖ້າຫາກເຮົາໄດ້
ບອກເຈົ້າໃຫ້ຮູ້ສິ່ງທີ່ມະນຸດຄົນອື່ນບໍ່ຮູ້ ເຈົ້າ
ກໍໄດ້ຮັບການເປັນພະຍານບໍ່ແມ່ນບໍ?
25 ແລະ, ຈົ່ງ ເບິ່ງ, ເຮົາໄດ້ມອບຂອງ
ປະທານໃຫ້ແກ່ເຈົ້າ, ຖ້າເຈົ້າປາດຖະໜາ
ຈາກເຮົາ, ເພື່ອ [ກ]ແປ, ແມ່ນແຕ່ຄືກັນກັບຜູ້
ຮັບໃຊ້ຂອງເຮົາ ໂຈເຊັບ.
26 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ວ່າມີ [ກ]ບັນທຶກທີ່ບັນຈຸພຣະກິດຕິຄຸນ
ຂອງເຮົາຢ່າງຫລວງຫລາຍ, ຊຶ່ງຖືກຮັກສາ
ໄວ້ ເພາະ [ຂ]ຄວາມຊົ່ວຮ້າຍຂອງຜູ້ຄົນ;
27 ແລະ ບັດນີ້ ເຮົາບັນຊາເຈົ້າ, ວ່າຖ້າ
ເຈົ້າມີຄວາມປາດຖະໜາດີ—ຄວາມປາດ
ຖະໜາທີ່ຈະສະສົມຊັບສິນໄວ້ໃຫ້ຕົນຢູ່ໃນ
ສະຫວັນ—ແລ້ວເຈົ້າຈະຊ່ວຍເຫລືອໃນ
ການນຳ [ກ]ພຣະຄຳພີສ່ວນຕ່າງໆຂອງເຮົາ
ອອກມາສູ່ຄວາມສະຫວ່າງ ຊຶ່ງຖືກເຊື່ອງ
ຊ້ອນໄວ້ເພາະຄວາມຊົ່ວຮ້າຍ, ໂດຍຂອງ
ປະທານຂອງເຈົ້າ.
28 ແລະ ບັດນີ້, ຈົ່ງເບິ່ງ, ເຮົາມອບຂໍ
ກະແຈແຫ່ງຂອງປະທານນີ້ໃຫ້ແກ່ເຈົ້າ,
ແລະ ໃຫ້ແກ່ໂຈເຊັບຜູ້ຮັບໃຊ້ຂອງເຮົາຄື
ກັນ, ຊຶ່ງຈະນຳການປະຕິບັດສາດສະໜາ
ກິດອອກມາສູ່ຄວາມສະຫວ່າງ; ແລະ ດ້ວຍ

20 *ກ* ອຫ 3:21; ຄພ 84:85.
21 *ກ* ຄມພ ພຣະເຢຊູຄຣິດ.
*ຂ* ຢຮ 1:10–12; ກຈກ 3:13–17; 3 ນຟ 9:16; ຄພ 45:8.
*ຄ* ຢຮ 1:5; ຄພ 10:58. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ງ* ຄມພ ຄວາມມືດທາງວິນຍານ.
22 *ກ* ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
23 *ກ* ຄມພ ສະຫງົບ, ຄວາມສະຫງົບ.
*ຂ* 1 ຢຮ 5:9; ຄພ 18:2.
25 *ກ* ມຊຢ 8:13; ຄພ 5:4; 9:1–5, 10.
26 *ກ* ຄພ 8:1; 9:2. ຄມພ ພຣະຄຳພີ—ພຣະຄຳພີທີ່ໄດ້ທຳນາຍໄວ້ຈະອອກມາ.
*ຂ* ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
27 *ກ* ຄພ 35:20.

ປາກ ຂອງ [ກ]ພະຍານ ສອງ ຫລື ສາມ ຄົນ
ທຸກໆຄຳຈະຖືກສະຖາປະນາ.
29 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ຖ້າເຂົາປະຕິເສດຄຳຂອງເຮົາ, ແລະ
ພາກສ່ວນນີ້ຂອງພຣະກິດຕິຄຸນ ແລະ ສາດ
ສະໜາກິດຂອງເຮົາ, ເຈົ້າຍ່ອມເປັນສຸກ,
ເພາະເຂົາບໍ່ສາມາດເຮັດກັບເຈົ້າຫລາຍໄປ
ກວ່າທີ່ເຂົາສາມາດເຮັດກັບເຮົາ.
30 ແລະ ແມ່ນແຕ່ຖ້າເຂົາ [ກ]ເຮັດກັບເຈົ້າ
ດັ່ງທີ່ເຂົາໄດ້ເຮັດກັບເຮົາ, ເຈົ້າຍ່ອມເປັນ
ສຸກ, ເພາະເຈົ້າຈະໄດ້ [ຂ]ຢູ່ນຳເຮົາໃນ [ຄ]ລັດ
ສະໝີພາບ.
31 ແຕ່ ຖ້າ ຫາກ ເຂົາ ບໍ່ [ກ]ປະ ຕິ ເສດ ຄຳ
ຂອງເຮົາ, ຊຶ່ງຈະຖືກສະຖາປະນາໄວ້ໂດຍ
[ຂ]ປະຈັກພະຍານ ທີ່ ຈະ ໃຫ້ໄວ້, ເຂົາຍ່ອມ
ເປັນສຸກ, ແລະ ເມື່ອນັ້ນ ເຈົ້າຈະມີຄວາມ
ຊື່ນຊົມໃນຜົນງານຂອງເຈົ້າ.
32 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ດັ່ງທີ່ເຮົາໄດ້ກ່າວກັບສານຸສິດຂອງ
ເຮົາ, ບ່ອນໃດທີ່ສອງ ຫລື ສາມຄົນມາ [ກ]ເຕົ້າ
ໂຮມກັນ ໃນນາມຂອງເຮົາ, ບໍ່ວ່າຈະກ່ຽວ
ກັບເລື່ອງໃດ, ຈົ່ງເບິ່ງ, ເຮົາຈະຢູ່ບ່ອນນັ້ນ
ໃນ [ຂ]ທ່າມກາງພວກເຂົາ—ແມ່ນແຕ່ເຮົາຈະ
ຢູ່ໃນທ່າມກາງເຈົ້າເຊັ່ນນັ້ນເໝືອນກັນ.
33 [ກ]ຢ່າຢ້ານກົວທີ່ຈະເຮັດຄວາມດີ, ບຸດ
ຂອງເຮົາ, ເພາະເຈົ້າ [ຂ]ຫວ່ານສິ່ງໃດ, ເຈົ້າ
ກໍຈະເກັບກ່ຽວສິ່ງດຽວກັນນັ້ນ; ສະນັ້ນ, ຖ້າ
ຫາກເຈົ້າຫວ່ານຄວາມດີ ເຈົ້າກໍຈະເກັບ
ກ່ຽວຄວາມດີເປັນລາງວັນຂອງເຈົ້າ.
34 ສະນັ້ນ, ຢ່າຢ້ານກົວ, ຝູງແກະນ້ອຍ
ເອີຍ; ຈົ່ງເຮັດຄວາມດີ; ໃຫ້ແຜ່ນດິນໂລກ
ແລະ ນະລົກລວມກັນຕໍ່ຕ້ານເຈົ້າ, ແຕ່
ຖ້າຫາກເຈົ້າຖືກສ້າງຂຶ້ນເທິງ [ກ]ດານຫີນ
ຂອງເຮົາ, ແລ້ວມັນຈະເອົາຊະນະເຈົ້າ
ບໍ່ໄດ້.
35 ຈົ່ງເບິ່ງ, ເຮົາບໍ່ໄດ້ກ່າວໂທດເຈົ້າ; ຈົ່ງ
ໄປຕາມທາງຂອງເຈົ້າ ແລະ ຢ່າເຮັດ [ກ]ບາບ
ອີກຕໍ່ໄປ; ຈົ່ງປະຕິບັດວຽກງານທີ່ເຮົາໄດ້
ບັນຊາເຈົ້າດ້ວຍຄວາມມີສະຕິ.
36 ຈົ່ງ [ກ]ເບິ່ງທີ່ເຮົາໃນຄວາມນຶກຄິດທຸກ
ຢ່າງ; ຢ່າສົງໄສ, ຢ່າສູ່ຢ້ານ.
37 [ກ]ຈົ່ງ ເບິ່ງຮອຍ ແຜທີ່ຖືກ ແທງຢູ່ຂ້າງ
ຂອງເຮົາ, ແລະ ຮອຍ [ຂ]ຕະປູຢູ່ໃນມື ແລະ
ຕີນ ຂອງ ເຮົາ ນຳ ອີກ; ຈົ່ງ ຊື່ສັດ, ຈົ່ງຮັກ
ສາບັນຍັດຂອງເຮົາ, ແລະ ເຈົ້າຈະ [ຄ]ໄດ້
ຮັບ [ງ]ອານາຈັກສະຫວັນເປັນມູນມໍລະດົກ.
ອາແມນ.

---

28 *ກ* ພບຍ 19:15; 2 ກຣທ 13:1; 2 ນຟ 27:12–14; ຄພ 128:3.
30 *ກ* ຄພ 5:22; 135. ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
*ຂ* ພນມ 3:21.
*ຄ* ຄມພ ລັດສະໝີພາບ.
31 *ກ* 3 ນຟ 16:10–14; ຄພ 20:8–15.
*ຂ* ຄມພ ປະຈັກພະຍານ.
32 *ກ* ມທ 18:19–20. ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
*ຂ* ຄພ 29:5; 38:7.
33 *ກ* ຄມພ ກ້າຫານ, ຄວາມກ້າຫານ, ຢ່າງກ້າຫານ.
*ຂ* ຄລຕ 6:7–8; ມຊຢ 7:30–31; ແອວ 9:28; ຄພ 1:10.
34 *ກ* ພສສ 71:3; ມທ 7:24–25; 1 ກຣທ 10:1–4; ຮລມ 5:12; ຄພ 10:69; 18:4, 17; 33:13; ມຊ 7:53. ຄມພ ຫີນ.
35 *ກ* ຢຮ 8:3–11.
36 *ກ* ອຊຢ 45:22; ຄພ 43:34.
37 *ກ* ຄມພ ພຣະເຢຊູຄຣິດ—ການປະກົດຕົວຂອງພຣະຄຣິດຫລັງຈາກຊີວິດມະຕະ.
*ຂ* ຄມພ ຄຶງ, ການຄຶງ.
*ຄ* ມທ 5:3, 10; 3 ນຟ 12:3, 10.
*ງ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.

# ພາກທີ 7

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ອໍລີເວີ ຄາວເດີຣີ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນເມສາ 1829, ເມື່ອພວກເພິ່ນໄດ້ທູນຖາມຜ່ານອຸລິມ ແລະ ທຸມມິມ ກ່ຽວກັບວ່າໂຢຮັນສານຸສິດຜູ້ເປັນທີ່ຮັກຍັງຢູ່ໃນເນື້ອໜັງ ຫລື ເສຍຊີວິດແລ້ວ. ການເປີດເຜີຍເປັນການແປຂອງບັນທຶກທີ່ໂຢຮັນໄດ້ເຮັດໄວ້ໃນແຜ່ນໜັງ ແລະ ເຊື່ອງໄວ້ດ້ວຍຕົວເພິ່ນເອງ.*

*1–3, ໂຢຮັນຜູ້ເປັນທີ່ຮັກຈະມີຊີວິດຢູ່ຈົນກວ່າພຣະຜູ້ເປັນເຈົ້າສະເດັດມາ; 4–8, ເປໂຕ, ຢາໂກໂບ, ແລະ ໂຢຮັນ ຖືຂໍກະແຈຂອງພຣະກິດຕິຄຸນ.*

1 ແລະ ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ: [ກ]ໂຢຮັນ, ຜູ້ເປັນທີ່ຮັກຂອງເຮົາ, ເຈົ້າ [ຂ]ປາດຖະໜາສິ່ງໃດ? ເພາະຖ້າຫາກເຈົ້າຈະຂໍສິ່ງທີ່ເຈົ້າປະສົງ, ເຮົາຈະປະທານໃຫ້ແກ່ເຈົ້າ.

2 ແລະ ຂ້າພະເຈົ້າໄດ້ທູນຕໍ່ພຣະອົງວ່າ: ພຣະຜູ້ເປັນເຈົ້າເອີຍ ຂໍຈົ່ງໂປດປະທານອຳນາດເໜືອ [ກ]ຄວາມຕາຍໃຫ້ແກ່ຂ້າພຣະອົງ, ເພື່ອຂ້າພຣະອົງຈະມີຊີວິດຢູ່ ແລະ ນຳຈິດວິນຍານມາຫາພຣະອົງ.

3 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ເພາະເຈົ້າປາດຖະໜາສິ່ງນີ້ ເຈົ້າຈຶ່ງຈະມີຊີວິດ [ກ]ຢູ່ຕໍ່ໄປຈົນກວ່າເຮົາມາໃນ [ຂ]ລັດສະໝີພາບຂອງເຮົາ, ແລະ ຈະ [ຄ]ທຳນາຍຕໍ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ ແລະ ທຸກຜູ້ຄົນທັງປວງ.

4 ແລະ ເພາະດ້ວຍເຫດນີ້ ພຣະຜູ້ເປັນເຈົ້າຈຶ່ງໄດ້ກ່າວກັບເປໂຕວ່າ: ຖ້າຫາກເຮົາຍອມໃຫ້ລາວຢູ່ຕໍ່ໄປຈົນກວ່າເຮົາມາ, ມັນແມ່ນເລື່ອງຫຍັງຂອງເຈົ້າ? ເພາະລາວປາດຖະໜາຈາກເຮົາທີ່ຈະນຳຈິດວິນຍານມາຫາເຮົາ, ແຕ່ເຈົ້າປາດຖະໜາທີ່ຈະມາຫາເຮົາຢ່າງວ່ອງໄວໃນ [ກ]ອານາຈັກຂອງເຮົາ.

5 ເຮົາກ່າວກັບເຈົ້າ, ເປໂຕ, ນີ້ເປັນຄວາມປາດຖະໜາດີ; ແຕ່ຜູ້ເປັນທີ່ຮັກຂອງເຮົາປາດຖະໜາວ່າ ລາວຈະໄດ້ເຮັດວຽກງານຕື່ມອີກ, ຫລື ເຮັດວຽກງານທີ່ຍິ່ງໃຫຍ່ໃນທ່າມກາງມະນຸດຫລາຍກວ່າທີ່ລາວໄດ້ເຮັດຜ່ານມາ.

6 ແທ້ຈິງແລ້ວ, ລາວໄດ້ຮັບເອົາວຽກງານອັນຍິ່ງໃຫຍ່; ສະນັ້ນເຮົາຈຶ່ງຈະເຮັດໃຫ້ລາວເປັນຄືໄຟທີ່ລຸກໄໝ້ ແລະ ເປັນທູດຜູ້ [ກ]ປະຕິບັດສາດສະໜາກິດ; ລາວຈະປະຕິບັດຕໍ່ຜູ້ທີ່ເປັນ [ຂ]ທາຍາດແຫ່ງຄວາມລອດຜູ້ອາໄສຢູ່ເທິງ [ຄ]ແຜ່ນດິນໂລກ.

7 ແລະ ເຮົາຈະໃຫ້ເຈົ້າປະຕິບັດຕໍ່ລາວ ແລະ ຕໍ່ຢາໂກໂບອ້າຍນ້ອງຂອງເຈົ້າ; ແລະ ແກ່ເຈົ້າເຮົາຈະມອບອຳນາດນີ້ ແລະ [ກ]ຂໍ

**7** 1 *ກ* ຄມພ ໂຢຮັນ, ລູກຊາຍຂອງເຊເບດາຍ.
*ຂ* 3 ນຟ 28:1–10.
2 *ກ* ລກ 9:27. ຄມພ ຄວາມຕາຍທາງຮ່າງກາຍ.
3 *ກ* ຢຮ 21:20–23. ຄມພ ບຸກຄົນທີ່ຖືກປ່ຽນສະພາບແລ້ວ.
*ຂ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ລັດສະໝີພາບ.
*ຄ* ພນມ 10:11.
4 *ກ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
6 *ກ* ຄພ 130:5.
*ຂ* ຄພ 76:86–88.
*ຄ* ຢຮ 10:8–11; ຄພ 77:14.
7 *ກ* ມທ 16:19; ກຈກ 15:7; ຈສ—ປ 1:72. ຄມພ ຂໍກະແຈຂອງຖານະປະໂລຫິດ.

ກະແຈຂອງການປະຕິບັດສາດສະໜາກິດ
ໃຫ້ ຈົນກວ່າເຮົາມາ.

8 ຕາມຄວາມຈິງ ເຮົາກ່າວກັບພວກເຈົ້າ
ວ່າ ພວກເຈົ້າທັງສອງຈະໄດ້ຮັບຕາມຄວາມ
ປາດຖະໜາຂອງພວກເຈົ້າ, ເພາະພວກ
ເຈົ້າທັງສອງ [ກ]ຊື່ນຊົມໃນສິ່ງທີ່ພວກເຈົ້າ
ປາດຖະໜາ.

# ພາກທີ 8

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ອໍລີເວີ ຄາວເດີຣີ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນເມສາ 1829. ລະຫວ່າງການແປພຣະຄຳພີມໍມອນ, ອໍລີເວີ, ຜູ້ສືບຕໍ່ຮັບໃຊ້ເປັນຄົນຂຽນຄຳແປ, ຊຶ່ງຂຽນຕາມການບອກຂອງສາດສະດາ, ປາດຖະໜາທີ່ຈະໄດ້ຮັບຂອງປະທານແຫ່ງການແປ. ພຣະຜູ້ເປັນເຈົ້າໄດ້ຕອບຄຳອ້ອນວອນຂອງເພິ່ນໂດຍການເປີດເຜີຍນີ້.*

*1–5, ການເປີດເຜີຍມາເຖິງໂດຍອຳນາດຂອງພຣະວິນຍານບໍລິສຸດ; 6–12, ຄວາມຮູ້ເລື່ອງຄວາມລຶກລັບ ຂອງພຣະເຈົ້າ ແລະ ອຳນາດທີ່ຈະແປບັນທຶກຂອງສະໄໝບູຮານມາເຖິງໂດຍສັດທາ.*

1 [ກ]ອໍລີເວີ ຄາວເດີຣີ, ຕາມຈິງ, ຕາມຈິງ
ແລ້ວ, ເຮົາກ່າວກັບເຈົ້າ, ວ່າຕາບໃດທີ່
ພຣະຜູ້ເປັນເຈົ້າ ຜູ້ຊຶ່ງເປັນພຣະເຈົ້າຂອງ
ເຈົ້າ ແລະ ພຣະຜູ້ໄຖ່ຂອງເຈົ້າຊົງພຣະ
ຊົນຢູ່ຢ່າງແນ່ນອນສັນໃດ, ເຈົ້າຈະໄດ້ຮັບ
[ຂ]ຄວາມຮູ້ເຖິງສິ່ງໃດກໍຕາມທີ່ເຈົ້າຈະ [ຄ]ຂໍ
ດ້ວຍສັດທາ, ດ້ວຍໃຈທີ່ຊື່ສັດຢ່າງແນ່ນອນ
ສັນນັ້ນ, ໂດຍເຊື່ອວ່າເຈົ້າຈະໄດ້ຮັບຄວາມ
ຮູ້ກ່ຽວກັບອັກຂະລະຢູ່ໃນ [ງ]ບັນທຶກອັນເກົ່າ
ແກ່, ຊຶ່ງເປັນຂອງບູຮານ, ຊຶ່ງບັນຈຸພຣະຄຳ
ພີສ່ວນຕ່າງໆຂອງເຮົາ ທີ່ໄດ້ຖືກກ່າວເຖິງ
ໂດຍ [ຈ]ການສະແດງໃຫ້ປະຈັກໂດຍພຣະ
ວິນຍານຂອງເຮົາ.

2 ແທ້ຈິງແລ້ວ, ຈົ່ງເບິ່ງ, ເຮົາຈະ [ກ]ບອກ
ເຈົ້າໃນຈິດໃຈ ແລະ ໃນ [ຂ]ຫົວໃຈຂອງເຈົ້າ,
ໂດຍ [ຄ]ພຣະວິນຍານບໍລິສຸດ, ຊຶ່ງຈະມາສູ່
ເຈົ້າ ແລະ ຈະມາສະຖິດຢູ່ໃນຫົວໃຈຂອງ
ເຈົ້າ.

3 ບັດນີ້, ຈົ່ງເບິ່ງ, ນີ້ຄືວິນຍານແຫ່ງການ
ເປີດເຜີຍ; ຈົ່ງເບິ່ງ, ນີ້ຄືວິນຍານ ຊຶ່ງໂດຍ
ວິນຍານນີ້ໂມເຊໄດ້ພາລູກຫລານຂອງ
ອິດສະຣາເອນຂ້າມ [ກ]ທະເລແດງໄປເທິງ
ແຜ່ນດິນແຫ້ງ.

4 ສະນັ້ນນີ້ຄືຂອງປະທານຂອງເຈົ້າ; ຈົ່ງ
ນຳໃຊ້ມັນ, ແລະ ເຈົ້າເປັນສຸກແລ້ວ, ເພາະ
ມັນຈະປົດປ່ອຍເຈົ້າໃຫ້ພົ້ນຈາກກຳມືຂອງ
ສັດຕູຂອງເຈົ້າ, ຖ້າບໍ່ເປັນເຊັ່ນນັ້ນ, ເຂົາ
ຈະປະຫານເຈົ້າ ແລະ ນຳຈິດວິນຍານຂອງ

7 8 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
8 1 *ກ* ຈສ—ປ 1:66. ຄມພ ຄາວເດີຣີ, ອໍລີເວີ.
*ຂ* ຄມພ ຄວາມຮູ້.
*ຄ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ງ* ຄພ 6:26–27; 9:2.
*ຈ* ຄພ 5:16.
2 *ກ* ຄພ 9:7–9. ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ຄມພ ໃຈ.
*ຄ* ຄມພ ພຣະວິນຍານບໍລິສຸດ.
3 *ກ* ອພຍ 14:13–22; ພບຍ 11:4; 1 ນຟ 4:2; ມຊຢ 7:19. ຄມພ ທະເລແດງ.

ເຈົ້າໄປສູ່ຄວາມພິນາດ.
5 ໂອ້, ຈົ່ງຈືຈຳ [ກ]ຖ້ອຍຄຳເຫລົ່ານີ້, ແລະ
ຮັກສາບັນຍັດຂອງເຮົາ. ຈົ່ງຈື່ຈຳວ່າ ນີ້ຄື
ຂອງປະທານຂອງເຈົ້າ.
6 ບັດນີ້ ນີ້ບໍ່ ແມ່ນຂອງປະທານທັງໝົດ
ຂອງເຈົ້າ; ເພາະເຈົ້າມີຂອງປະທານອີກຢ່າງ
ໜຶ່ງ, ຊຶ່ງເປັນຂອງປະທານແຫ່ງອາໂຣນ; ຈົ່ງ
ເບິ່ງ, ມັນໄດ້ບອກເຈົ້າຫລາຍສິ່ງ;
7 ຈົ່ງ ເບິ່ງ, ບໍ່ ມີ ອຳນາດອື່ນອີກ, ນອກ
ຈາກອຳນາດຂອງພຣະເຈົ້າ, ທີ່ຈະເຮັດໃຫ້
ຂອງປະທານແຫ່ງອາໂຣນນີ້ຢູ່ກັບເຈົ້າໄດ້.
8 ສະນັ້ນ, ຢ່າສົງໄສ, ເພາະມັນເປັນຂອງ
ປະທານຂອງພຣະເຈົ້າ; ແລະ ເຈົ້າຄວນຖື
ມັນໄວ້ຢູ່ໃນມືຂອງເຈົ້າ, ແລະ ເຮັດວຽກງານ
ທີ່ໜ້າອັດສະຈັນໃຈ; ແລະ ບໍ່ມີອຳນາດໃດ
ທີ່ຈະສາມາດເອົາມັນໄປຈາກມືຂອງເຈົ້າ,
ເພາະມັນເປັນວຽກງານຂອງພຣະເຈົ້າ.
9 ແລະ, ສະນັ້ນ, ສິ່ງໃດກໍຕາມທີ່ເຈົ້າ
ຈະຂໍໃຫ້ເຮົາບອກເຈົ້າໂດຍທາງນັ້ນ, ສິ່ງ
ນັ້ນເຮົາຈະມອບໃຫ້ເຈົ້າ, ແລະ ເຈົ້າຈະມີ
ຄວາມຮູ້ກ່ຽວກັບມັນ.
10 ຈົ່ງ ຈຳ ໄວ້ ວ່າ ຖ້າ ປາດ ສະ ຈາກ
[ກ]ສັດທາ ເຈົ້າຈະເຮັດຫຍັງບໍ່ໄດ້; ສະນັ້ນ
ຈົ່ງຂໍດ້ວຍສັດທາ. ຢ່າເຮັດຫລິ້ນໆກັບສິ່ງ
ເຫລົ່ານີ້; ຢ່າ [ຂ]ຂໍສິ່ງທີ່ເຈົ້າບໍ່ຄວນຂໍ.
11 ຖາມເພື່ອວ່າເຈົ້າຈະຮູ້ຄວາມລຶກລັບ
ຂອງພຣະເຈົ້າ, ແລະ ວ່າເຈົ້າຈະ [ກ]ແປ ແລະ
ໄດ້ຮັບຄວາມຮູ້ຈາກ ບັນທຶກບູຮານທັງໝົດ
ນັ້ນ ຊຶ່ງໄດ້ຖືກເຊື່ອງຊ້ອນໄວ້, ຊຶ່ງສັກສິດ;
ແລະ ອີງຕາມສັດທາຂອງເຈົ້າ ມັນຈະເກີດ
ຂຶ້ນແກ່ເຈົ້າ.
12 ຈົ່ງເບິ່ງ, ເຮົາຄືຜູ້ທີ່ກ່າວມັນໄວ້ດັ່ງນີ້;
ແລະ ເຮົາຄືຜູ້ດຽວກັນນັ້ນທີ່ໄດ້ກ່າວກັບ
ເຈົ້າມາຕັ້ງແຕ່ຕົ້ນ. ອາແມນ.

## ພາກທີ 9

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ອໍລິເວີ ຄາວເດີຣີ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນເມສາ 1829. ອໍລິເວີຖືກຕັກເຕືອນໃຫ້ອົດທົນ ແລະ ຖືກຊຸກຍູ້ໃຫ້ເຕັມໃຈທີ່ຈະຂຽນໃນຊ່ວງໄລຍະນັ້ນ ຕາມການບອກຂອງຜູ້ແປ, ແທນທີ່ຈະພະຍາຍາມແປ.*

*1–6, ມີບັນທຶກບູຮານເຫລັ້ມອື່ນໆທີ່ຍັງບໍ່ໄດ້ແປເທື່ອ; 7–14, ພຣະຄຳພີມໍມອນໄດ້ຖືກແປໂດຍທາງການສຶກສາ ແລະ ໂດຍການຢືນຢັນທາງວິນຍານ.*

1 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, ບຸດຂອງ
ເຮົາວ່າ ເພາະເຈົ້າບໍ່ໄດ້ [ກ]ແປຕາມທີ່ເຈົ້າ
ປາດຖະໜາຈາກເຮົາ, ແລະ ໄດ້ເລີ່ມຕົ້ນ
ອີກທີ່ຈະ [ຂ]ຂຽນໃຫ້ຜູ້ຮັບໃຊ້ຂອງເຮົາ,
ໂຈເຊັບ ສະມິດ, ຜູ້ລູກ, ສະນັ້ນເຮົາຈຶ່ງ
ຢາກໃຫ້ເຈົ້າຂຽນຕໍ່ໄປ ຈົນກວ່າເຈົ້າຈະ
ສຳເລັດບັນທຶກນີ້, ຊຶ່ງເຮົາໄດ້ຝາກຝັງໄວ້
ນຳລາວ.
2 ແລະ ຈາກນັ້ນ, ຈົ່ງເບິ່ງ, ເຮົາມີ [ກ]ບັນ

5 *ກ* ພບຍ 11:18–19.
10 *ກ* ຄມພ ສັດທາ.
*ຂ* ຄພ 88:63–65.
11 *ກ* ຄພ 9:1, 10.
**9** 1 *ກ* ຄພ 8:1, 11.
*ຂ* ຈສ—ປ 1:67.
2 *ກ* ຄພ 6:26; 8:1.

ທຶກ [ຂ]ອື່ນອີກ, ຊຶ່ງເຮົາຈະໃຫ້ພະລັງແກ່ເຈົ້າ
ເພື່ອເຈົ້າຈະໄດ້ຊ່ວຍແປ.
3 ຈົ່ງອົດ ທົນ, ບຸດຂອງເຮົາ, ເພາະ ມັນ
ເປັນຄວາມສະຫລຽວສະຫລາດຂອງເຮົາ,
ແລະ ມັນບໍ່ສົມຄວນທີ່ເຈົ້າຈະແປໃນເວລາ
ນີ້.
4 ຈົ່ງເບິ່ງ, ວຽກງານຊຶ່ງເຈົ້າຖືກເອີ້ນໃຫ້
ເຮັດ ແມ່ນທີ່ຈະຂຽນໃຫ້ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ.
5 ແລະ, ຈົ່ງເບິ່ງ, ເປັນເພາະວ່າເຈົ້າບໍ່ໄດ້
ສືບຕໍ່ດັ່ງທີ່ເຈົ້າໄດ້ເລີ່ມຕົ້ນ, ຕອນເຈົ້າ ໄດ້
ເລີ່ມແປ, ເຮົາຈຶ່ງໄດ້ເອົາສິດທິພິເສດນັ້ນໄປ
ຈາກເຈົ້າ.
6 ຢ່າ [ກ]ຈົ່ມ, ບຸດຂອງເຮົາ, ເພາະມັນເປັນ
ຄວາມສະຫລຽວສະຫລາດຂອງເຮົາ ທີ່ເຮົາ
ຈັດການກັບເຈົ້າໃນວິທີນີ້.
7 ຈົ່ງເບິ່ງ, ເຈົ້າບໍ່ເຂົ້າໃຈ; ເຈົ້າຄິດວ່າເຮົາ
ຈະມອບມັນໃຫ້ເຈົ້າ, ເມື່ອເຈົ້າບໍ່ໃຊ້ຄວາມ
ຄິດມີແຕ່ຈະທູນຖາມເຮົາ.
8 ແຕ່, ຈົ່ງ ເບິ່ງ, ເຮົາກ່າວ ກັບ ເຈົ້າ ວ່າ
ເຈົ້າຕ້ອງ [ກ]ສຶກສາມັນຢູ່ໃນຈິດໃຈຂອງເຈົ້າ
ກ່ອນ; ແລ້ວເຈົ້າຕ້ອງ [ຂ]ທູນຖາມເຮົາ ຖ້າ
ຫາກວ່າມັນຖືກຕ້ອງຫລືບໍ່, ຖ້າຫາກມັນຖືກ
ຕ້ອງ ເຮົາຈະເຮັດໃຫ້ [ຄ]ຊວງອົກຂອງເຈົ້າ
[ງ]ຮ້ອນຮົນພາຍໃນຕົວເຈົ້າ; ສະນັ້ນ, ເຈົ້າຈະ
[ຈ]ຮູ້ສຶກວ່າມັນຖືກຕ້ອງ.
9 ແຕ່ຖ້າຫາກມັນບໍ່ຖືກຕ້ອງ ເຈົ້າຈະບໍ່ມີ
ຄວາມຮູ້ສຶກເຊັ່ນນັ້ນ, ແຕ່ເຈົ້າຈະ [ກ]ງຶງງັນ
ໃນຄວາມຄິດ ຊຶ່ງຈະເຮັດໃຫ້ເຈົ້າລືມສິ່ງທີ່
ຜິດ; ສະນັ້ນ, ເຈົ້າຈະບໍ່ສາມາດຂຽນສິ່ງທີ່
ສັກສິດ ນອກຈາກເຈົ້າຈະໄດ້ຮັບມັນຈາກ
ເຮົາ.
10 ບັດນີ້, ຖ້າຫາກເຈົ້າຮູ້ເລື່ອງນີ້ມາກ່ອນ
ເຈົ້າກໍຄົງ [ກ]ແປໄດ້; ເຖິງຢ່າງໃດກໍຕາມ, ມັນ
ບໍ່ສົມຄວນທີ່ເຈົ້າຈະແປໃນຕອນນີ້.
11 ຈົ່ງ ເບິ່ງ, ມັນສົມຄວນເມື່ອຕອນເຈົ້າ
ໄດ້ເລີ່ມຕົ້ນ; ແຕ່ເຈົ້າໄດ້ [ກ]ຢ້ານກົວ, ແລະ
ເວລາ ໄດ້ຜ່ານໄປ ແລ້ວ, ແລະ ມັນບໍ່ ສົມ
ຄວນໃນຕອນນີ້;
12 ເພາະ, ເຈົ້າບໍ່ເຫັນບໍວ່າເຮົາໄດ້ມອບ
ພະລັງໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ໂຈເຊັບ ຢ່າງ
ພຽງພໍ, ຊຶ່ງໂດຍສິ່ງນັ້ນ ຈຶ່ງທົດແທນກັນ?
ແລະ ເຮົາບໍ່ໄດ້ກ່າວໂທດເຈົ້າທັງສອງຄົນ
ແນວໃດ.
13 ຈົ່ງເຮັດສິ່ງນີ້ທີ່ເຮົາໄດ້ບັນຊາເຈົ້າ,
ແລະ ເຈົ້າຈະຮຸ່ງເຮືອງ. ຈົ່ງຊື່ສັດ, ແລະ ຢ່າ
ຍອມຕໍ່ [ກ]ການລໍ້ລວງ.
14 ຈົ່ງ ຍຶດໝັ້ນ ໃນ ວຽກງານ ຊຶ່ງ [ກ]ວຽກ
ງານນັ້ນເຮົາໄດ້ [ຂ]ເອີ້ນເຈົ້າ, ແລະ ຜົມເສັ້ນ
ໜຶ່ງເທິງຫົວຂອງເຈົ້າກໍຈະບໍ່ເສຍໄປ, ແລະ
ເຈົ້າຈະຖືກ [ຄ]ຍົກຂຶ້ນໃນວັນສຸດທ້າຍ. ອາ
ແມນ.

2 *ຂ* ການກ່າວເຖິງກິດຈະກຳການແປເພີ່ມເຕີມ, ລວມທັງ ການແປພຣະຄຣິສຕະທຳຄຳພີ ແລະ ໜັງສືອັບຣາຮາມຂອງໂຈເຊັບ ສະມິດ, ຊຶ່ງອໍລີເວີ ຄາວເດີຣີ ໄດ້ຊ່ວຍເປັນຜູ້ຂຽນ. ຄມພ ການແປຂອງໂຈເຊັບ ສະມິດ (ປຈສ).
6 *ກ* ຄມພ ຈົ່ມ.
8 *ກ* ຄມພ ໄຕ່ຕອງ.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຄ* ລກ 24:32.
*ງ* ຄມພ ດົນໃຈ, ການດົນໃຈ; ປະຈັກພະຍານ.
*ຈ* ຄພ 8:2–3.
9 *ກ* ຄພ 10:2.
10 *ກ* ຄພ 8:11.
11 *ກ* ຄມພ ຢ້ານກົວ, ຄວາມຢ້ານກົວ.
12 *ກ* ຄພ 18:8.
13 *ກ* ຄມພ ລໍ້ລວງ, ການລໍ້ລວງ.
14 *ກ* 1 ກຣທ 16:13.
*ຂ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
*ຄ* ແອວ 13:29; ຄພ 17:8.

# ພາກທີ 10

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຮາມໂມນີ, ລັດເພັນໂຊເວເນຍ, ອາດເປັນລະຫວ່າງເດືອນເມສາ 1829, ເຖິງແມ່ນວ່າ ບາງສ່ວນອາດໄດ້ຮັບນັບແຕ່ໃນລະດູແລ້ງ ຂອງປີ 1828. ໃນນີ້ພຣະຜູ້ເປັນເຈົ້າບອກ ໂຈເຊັບເຖິງກຸ່ມຄົນຊົ່ວທີ່ໄດ້ປຸ້ນແປງຕົ້ນສະບັບ 116 ໜ້າທີ່ແປຈາກໜັງສືລີໄຮ, ໃນພຣະຄຳພີມໍມອນ. ຕົ້ນສະບັບດັ່ງກ່າວໄດ້ຫາຍໄປຈາກການຄອບຄອງຂອງມາຕິນ ແຮຣິສ, ຊຶ່ງຖືກຝາກຝັງໄວ້ຊົ່ວຄາວ. (ເບິ່ງຫົວຂໍ້ຂອງ ພາກທີ 3.) ແຜນການຊົ່ວຮ້າຍແມ່ນທີ່ຈະຄອຍຖ້າໃຫ້ແປໜ້າທີ່ຖືກລັກໄປນັ້ນຄືນໃໝ່ ແລະ ຈາກນັ້ນຈະຕຳນິ ຜູ້ແປ ໂດຍການເຮັດໃຫ້ເຫັນຄວາມບໍ່ສອດຄ່ອງກັນ ຊຶ່ງເກີດຂຶ້ນເນື່ອງດ້ວຍການປຸ້ນແປງ. ຈຸດປະສົງອັນຊົ່ວຮ້າຍນີ້ ຊຶ່ງມານຮ້າຍເປັນຕົ້ນຄິດ ແລະ ພຣະຜູ້ເປັນເຈົ້າຮູ້ຈັກແມ່ນແຕ່ໃນຂະນະທີ່ມໍມອນ, ນັກປະຫວັດສາດຊາວນີໄຟ, ພວມຫຍໍ້ແຜ່ນຈາລຶກເຂົ້າກັນ, ມີສະແດງໃຫ້ເຫັນຢູ່ໃນພຣະຄຳພີມໍມອນ (ເບິ່ງ ຄຳຂອງມໍມອນ 1:3–7).*

*1–26, ຊາຕານຍຸຍົງຄົນຊົ່ວໃຫ້ຕໍ່ຕ້ານວຽກງານຂອງພຣະຜູ້ເປັນເຈົ້າ; 27–33, ມັນສະແຫວງຫາທີ່ຈະທຳລາຍຈິດວິນຍານຂອງມະນຸດ; 34–52, ພຣະກິດຕິຄຸນຈະຕ້ອງອອກໄປຫາຊາວເລມັນ ແລະ ທຸກປະຊາຊາດຜ່ານພຣະຄຳພີມໍມອນ; 53–63, ພຣະຜູ້ເປັນເຈົ້າຈະສະຖາປະນາສາດສະໜາຈັກຂອງພຣະອົງ ແລະ ພຣະກິດຕິຄຸນຂອງພຣະອົງທ່າມກາງມະນຸດ; 64–70, ພຣະອົງຈະເຕົ້າໂຮມຄົນທີ່ກັບໃຈເຂົ້າໃນສາດສະໜາຈັກຂອງພຣະອົງ ແລະ ຈະຊ່ວຍຄົນທີ່ເຊື່ອຟັງໃຫ້ລອດ.*

1 ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ
ເພາະເຈົ້າໄດ້ມອບການຂຽນເຫລົ່ານັ້ນ ຊຶ່ງ
ເຈົ້າໄດ້ຮັບພະລັງໃຫ້ແປ ຜ່ານ [ກ]ອູລິມ ແລະ
ທູມມິມ, ໄວ້ໃນກຳມືຂອງຄົນ [ຂ]ຊົ່ວ, ເຈົ້າຈຶ່ງ
ໄດ້ເສຍມັນໄປ.
2 ແລະ ເຈົ້າ ກໍ ໄດ້ ເສຍ ຂອງ ປະທານ
ຂອງເຈົ້ານຳອີກໃນເວລາດຽວກັນ, ແລະ
[ກ]ຄວາມຄິດຂອງເຈົ້າກັບມືດມົວ.
3 ເຖິງຢ່າງໃດກໍຕາມ, ບັດນີ້ ມັນໄດ້ຖືກ
[ກ]ນຳຄືນມາໃຫ້ເຈົ້າຄືນອີກ; ສະນັ້ນ ຈົ່ງເບິ່ງ
ວ່າເຈົ້າຊື່ສັດ ແລະ ສືບຕໍ່ເຮັດວຽກງານການ
ແປທີ່ເຫລືອຢູ່ໃຫ້ສຳເລັດ ດັ່ງທີ່ເຈົ້າໄດ້ເລີ່ມ
ຕົ້ນ.
4 ຢ່າແລ່ນ [ກ]ໄວ ຫລື ເຮັດວຽກງານເກີນ
ກວ່າ [ຂ]ກຳລັງຂອງເຈົ້າ ແລະ ເງື່ອນໄຂ
ຕ່າງໆທີ່ຈັດໃຫ້ ເພື່ອເຈົ້າຈະສາມາດແປ;
ແຕ່ໃຫ້ [ຄ]ພາກພຽນຈົນເຖິງທີ່ສຸດ.
5 ຈົ່ງ [ກ]ອະທິຖານສະເໝີ, ເພື່ອເຈົ້າຈະ
ອອກມາຢ່າງຜູ້ຊະນະ; ແທ້ຈິງແລ້ວ, ເພື່ອ
ເຈົ້າຈະເອົາຊະນະຊາຕານ, ແລະ ເພື່ອເຈົ້າ
ຈະຫລົບໜີຈາກກຳມືຂອງບໍລິວານຂອງ
ຊາຕານ ທີ່ຄ້ຳຈູນວຽກງານຂອງມັນ.
6 ຈົ່ງເບິ່ງ, ພວກເຂົາສະແຫວງທີ່ຈະ [ກ]ທຳ
ລາຍເຈົ້າ; ແທ້ຈິງແລ້ວ, ແມ່ນແຕ່ [ຂ]ຄົນທີ່ເຈົ້າ
ໄວ້ວາງໃຈກໍສະແຫວງ ທີ່ຈະທຳລາຍເຈົ້າ.

**10** 1 *ກ* ຄມພ ອູລິມ ແລະ ທູມມິມ.
*ຂ* ຄພ 3:1–15.
2 *ກ* ຄມພ ຈິດໃຈ.
3 *ກ* ຄພ 3:10.
4 *ກ* ມຊຢ 4:27.
*ຂ* ອພຍ 18:13–26.
*ຄ* ມທ 10:22.
ຄມພ ພາກພຽນ, ຄວາມພາກພຽນ.
5 *ກ* 3 ນຟ 18:15–21.
ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
6 *ກ* ຄພ 5:32–33; 38:13.
*ຂ* ຄພ 5:1–2.

7 ແລະ ເພາະ ດ້ວຍ ເຫດ ນີ້ ເຮົາ ຈຶ່ງ
ກ່າວ ວ່າ ເຂົາ ເປັນ ຄົນ ຊົ່ວ, ເພາະ ເຂົາ ໄດ້
ສະແຫວງ ທີ່ ຈະ ເອົາ ສິ່ງ ທີ່ ຝາກ ຝັງ ໄວ້ ນຳ
ເຈົ້າໄປຈາກເຈົ້າ; ແລະ ເຂົາກໍໄດ້ສະແຫວງ
ທີ່ ຈະ ທຳ ລາຍ ຂອງປະທານ ຂອງ ເຈົ້າ ນຳ
ອີກ.
8 ແລະ ເພາະເຈົ້າໄດ້ມອບການຂຽນໄວ້
ໃນມືຂອງເຂົາ, ຈົ່ງເບິ່ງ, ພວກຄົນຊົ່ວຈຶ່ງໄດ້
ເອົາມັນໄປຈາກເຈົ້າ.
9 ສະນັ້ນ, ເຈົ້າ ຈຶ່ງ ໄດ້ ມອບ ມັນ, ແທ້ ຈິງ
ແລ້ວ, ສິ່ງທີ່ສັກສິດ, ໄວ້ກັບຄວາມຊົ່ວຮ້າຍ.
10 ແລະ, ຈົ່ງ ເບິ່ງ, [ກ]ຊາຕານ ໄດ້ເອົາມັນ
ໃສ່ໄວ້ໃນໃຈຂອງເຂົາ ເພື່ອປ່ຽນແປງຖ້ອຍ
ຄຳ ຊຶ່ງເຈົ້າໄດ້ໃຫ້ຂຽນໄວ້, ຫລື ຊຶ່ງເຈົ້າໄດ້
ແປ, ທີ່ຫລຸດໄປຈາກມືຂອງເຈົ້າ.
11 ແລະ ຈົ່ງ ເບິ່ງ, ເຮົາກ່າວກັບ ເຈົ້າວ່າ
ເພາະ ພວກ ເຂົາ ໄດ້ ປ່ຽນ ແປງ ຖ້ອຍ ຄຳ
ເຫລົ່ານັ້ນ, ມັນຈຶ່ງອ່ານກົງກັນຂ້າມກັບສິ່ງທີ່
ເຈົ້າໄດ້ແປ ແລະ ໃຫ້ຂຽນໄວ້;
12 ແລະ, ໂດຍວິທີນີ້, ມານໄດ້ສະແຫວງ
ຫາທີ່ຈະວາງແຜນອັນມີເລ່ຫລ່ຽມ, ເພື່ອມັນ
ຈະໄດ້ທຳລາຍວຽກງານນີ້;
13 ເພາະມັນໄດ້ເອົາໃສ່ໄວ້ໃນໃຈພວກ
ເຂົາ ເພື່ອ ໃຫ້ ເຮັດ ສິ່ງນີ້, ເພາະ ໂດຍ ການ
ເວົ້າຕົວະ ພວກເຂົາຈະກ່າວ ຫາວ່າ ພວກ
ເຂົາ [ກ]ຈັບເຈົ້າໄດ້ດ້ວຍຖ້ອຍຄຳທີ່ເຈົ້າອ້າງ
ວ່າໄດ້ແປ.
14 ຕາມຄວາມຈິງ, ເຮົາກ່າວກັບເຈົ້າວ່າ
ເຮົາຈະບໍ່ຍອມໃຫ້ຊາຕານສຳເລັດແຜນອັນ
ຊົ່ວຮ້າຍຂອງມັນໃນສິ່ງນີ້.
15 ເພາະຈົ່ງເບິ່ງ, ມັນໄດ້ເອົາມັນໃສ່ໄວ້
ໃນໃຈຂອງພວກເຂົາໃຫ້ເຈົ້າທົດລອງພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ໃນ
ການຂໍແປມັນຄືນອີກ.
16 ແລະ ເມື່ອນັ້ນ, ຈົ່ງເບິ່ງ, ພວກເຂົາ
ກ່າວ ແລະ ຄິດ ຢູ່ ໃນ ໃຈ ຂອງພວກເຂົາ
ວ່າ—ພວກ ເຮົາ ຈະ ເບິ່ງຖ້າຫາກວ່າພຣະ
ເຈົ້າໄດ້ປະທານພະລັງໃຫ້ລາວແປຫລືບໍ່;
ຖ້າເປັນເຊັ່ນນັ້ນ, ພຣະອົງກໍຈະປະທານພະ
ລັງໃຫ້ລາວຄືນອີກ;
17 ແລະ ຖ້າຫາກພຣະເຈົ້າໄດ້ປະທານ
ພະລັງໃຫ້ລາວຄືນອີກ, ຫລື ຖ້າຫາກລາວ
ແປຄືນອີກ, ຫລື, ອີກຄຳໜຶ່ງ, ຖ້າລາວແປ
ຄຳດຽວກັນນັ້ນອອກມາ, ຈົ່ງເບິ່ງ, ພວກເຮົາ
ກໍມີຢ່າງດຽວກັນນັ້ນ, ແລະ ພວກເຮົາໄດ້
ປ່ຽນແປງມັນແລ້ວ;
18 ສະນັ້ນ ມັນຈະບໍ່ຄືກັນ, ແລະ ພວກ
ເຮົາຈະກ່າວວ່າ ລາວເວົ້າຕົວະໃນຖ້ອຍຄຳ
ຂອງລາວ, ແລະ ວ່າລາວບໍ່ມີຂອງປະທານ,
ແລະ ວ່າລາວບໍ່ມີພະລັງ;
19 ສະນັ້ນ ພວກເຮົາຈະທຳລາຍລາວ,
ແລະ ວຽກງານນຳອີກ; ແລະ ພວກເຮົາຈະ
ເຮັດສິ່ງນີ້ ເພື່ອວ່າພວກເຮົາຈະບໍ່ໄດ້ຮັບ
ຄວາມອັບອາຍ ໃນບັ້ນທ້າຍ, ແລະ ເພື່ອ
ພວກເຮົາຈະໄດ້ຮັບການຍ້ອງຍໍຈາກໂລກ.
20 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ວ່າຊາຕານມີອຳນາດອັນໃຫຍ່ຫລວງ
ໃນໃຈຂອງພວກເຂົາ; ມັນ [ກ]ຍຸຍົງພວກເຂົາ
ໃຫ້ເຮັດ [ຂ]ຄວາມຊົ່ວຮ້າຍຕໍ່ຕ້ານສິ່ງທີ່ດີ;
21 ແລະ ໃຈ ຂອງພວກ ເຂົາ [ກ]ເສື່ອມ
ຊາມ, ແລະ ເຕັມໄປດ້ວຍ [ຂ]ຄວາມຊົ່ວຮ້າຍ
ແລະ ຄວາມໜ້າກຽດຊັງ; ແລະ ພວກເຂົາ
[ຄ]ຮັກ [ງ]ຄວາມ ມືດ ຫລາຍ ກວ່າ ຄວາມສະ
ຫວ່າງ, ເພາະ [ຈ]ການກະທຳຂອງພວກເຂົາ

10 ກ ຄມພ ມານ.
13 ກ ຢມຢ 5:26.
20 ກ 2 ນຟ 28:20–22.
ຂ ຄມພ ບາບ.
21 ກ ຄພ 112:23–24.
ຂ ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
ຄ ມຊ 5:13–18.
ງ ມຊຢ 15:26. ຄມພ ຄວາມມືດ ທາງວິນຍານ.
ຈ ຢຮ 3:18–21; ຄພ 29:45.

ຊົ່ວຮ້າຍ; ສະນັ້ນ ພວກເຂົາຈຶ່ງບໍ່ທູນຂໍຈາກ
ເຮົາ.
22 ກຊາຕານຍຸຍົງພວກເຂົາ, ເພື່ອມັນຈະ
ໄດ້ ຂນຳຈິດວິນຍານຂອງພວກເຂົາໄປສູ່
ຄວາມພິນາດ.
23 ແລະ ດັ່ງນັ້ນມັນໄດ້ວາງແຜນອັນມີເລ່
ຫລ່ຽມ, ໂດຍຄິດຈະທຳລາຍວຽກງານຂອງ
ພຣະເຈົ້າ; ແຕ່ເຮົາຈະຮຽກຮ້ອງສິ່ງນີ້ຈາກ
ມືຂອງພວກເຂົາ, ແລະ ມັນຈະກາຍເປັນ
ຄວາມອັບອາຍ ແລະ ການກ່າວໂທດຂອງ
ພວກເຂົາໃນວັນຂອງ ກການພິພາກສາ.
24 ແທ້ຈິງແລ້ວ, ມັນໄດ້ຍຸຍົງໃຈຂອງ
ພວກເຂົາ ເພື່ອໃຫ້ຄຽດແຄ້ນຕໍ່ຕ້ານວຽກ
ງານນີ້.
25 ແທ້ຈິງແລ້ວ, ມັນໄດ້ກ່າວກັບພວກ
ເຂົາວ່າ: ໃຫ້ຫລອກລວງ ແລະ ຄອຍຖ້າ
ຈັບ, ເພື່ອພວກເຈົ້າຈະໄດ້ທຳລາຍ; ຈົ່ງ
ເບິ່ງ, ມັນບໍ່ເປັນພິດເປັນໄພຫຍັງ. ແລະ ມັນ
ໄດ້ເວົ້າຍ້ອງຍໍພວກເຂົາດັ່ງນັ້ນ, ແລະ ບອກ
ພວກເຂົາວ່າ ມັນບໍ່ເປັນບາບແນວໃດທີ່ຈະ
ເວົ້າຕົວະ ເພື່ອຈະໄດ້ຈັບຄົນທີ່ ກເວົ້າຕົວະ,
ເພື່ອພວກເຂົາຈະໄດ້ທຳລາຍເຂົາ.
26 ແລະ ມັນໄດ້ເວົ້າຍ້ອງຍໍພວກເຂົາດັ່ງ
ນັ້ນ, ແລະ ກນຳພວກເຂົາໄປຈົນກວ່າມັນ
ໄດ້ລາກຈິດວິນຍານຂອງພວກເຂົາລົງໄປ
ຂນະລົກ; ແລະ ມັນໄດ້ເຮັດໃຫ້ພວກເຂົາ
ຖືກ ຄບ້ວງຂອງຕົນເອງດັ່ງນັ້ນ.
27 ແລະ ມັນໄດ້ຂຶ້ນໄປ ແລະ ລົງມາດັ່ງ
ນັ້ນ, ກໄປຫາບ່ອນນັ້ນບ່ອນນີ້ຢູ່ໃນແຜ່ນດິນ
ໂລກ, ສະແຫວງຫາທີ່ຈະ ຂທຳລາຍຈິດວິນ
ຍານຂອງມະນຸດ.
28 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ວິບັດແກ່ຄົນທີ່ເວົ້າຕົວະ ເພື່ອ ກຫລອກ
ລວງ ເພາະເຂົາຄິດວ່າ ຄົນອື່ນເວົ້າຕົວະ
ເພື່ອຫລອກລວງ; ເພາະຄົນເຊັ່ນນັ້ນຈະບໍ່
ພົ້ນຈາກ ຂຄວາມຍຸດຕິທຳ ຂອງພຣະເຈົ້າ.
29 ບັດນີ້, ຈົ່ງເບິ່ງ, ພວກເຂົາໄດ້ປ່ຽນ
ແປງຖ້ອຍຄຳເຫລົ່ານັ້ນ, ເພາະຊາຕານໄດ້
ກ່າວກັບພວກເຂົາວ່າ: ເຂົາໄດ້ຫລອກລວງ
ພວກເຈົ້າ—ແລະ ມັນໄດ້ຍຸຍົງພວກເຂົາໄປ
ເຮັດຄວາມຊົ່ວຮ້າຍດັ່ງນັ້ນ, ເພື່ອໃຫ້ເຈົ້າ
ກທົດລອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງເຈົ້າ.
30 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ເຈົ້າຈະ
ບໍ່ແປຖ້ອຍຄຳເຫລົ່ານັ້ນອີກ ຊຶ່ງໄດ້ຫລຸດໄປ
ຈາກມືຂອງເຈົ້າ.
31 ເພາະ, ຈົ່ງເບິ່ງ, ພວກເຂົາຈະບໍ່ສຳ
ເລັດໃນແຜນອັນຊົ່ວຮ້າຍຂອງພວກເຂົາ
ໃນການເວົ້າຕົວະຕໍ່ຕ້ານຖ້ອຍຄຳເຫລົ່າ
ນັ້ນ. ເພາະ, ຈົ່ງເບິ່ງ, ຖ້າຫາກເຈົ້າໄດ້ນຳ
ຖ້ອຍຄຳຢ່າງດຽວກັນອອກມາ ພວກເຂົາ
ຈະກ່າວວ່າ ເຈົ້າຕົວະ ແລະ ວ່າ ເຈົ້າອ້າງວ່າ
ໄດ້ແປ, ແລະ ວ່າເຈົ້າໄດ້ຂັດກັບຕົນເອງ.
32 ແລະ, ຈົ່ງເບິ່ງ, ພວກເຂົາຈະປ່າວປະ
ກາດເລື່ອງນີ້, ແລະ ຊາຕານຈະເຮັດໃຫ້ໃຈ
ຂອງຜູ້ຄົນແຂງກະດ້າງ ເພື່ອຍຸຍົງເຂົາໃຫ້
ຄຽດແຄ້ນໃຫ້ເຈົ້າ, ເພື່ອເຂົາຈະບໍ່ເຊື່ອຖ້ອຍ
ຄຳຂອງເຮົາ.

---

22 *ກ* 2 ນຟ 2:17–18.
*ຂ* ຄນພ ລໍ້ລວງ, ການລໍ້ລວງ.
23 *ກ* ຣລມ 8:25; ຄພ 121:23–25.
25 *ກ* 2 ນຟ 2:18; 28:8–9; ແອວ 10:17; ມຊ 4:4. ຄນພ ຕົວະ.
26 *ກ* ຄນພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຂ* ຄນພ ນະລົກ.
*ຄ* ສພສ 29:5–6; 1 ນຟ 14:3.
27 *ກ* ໂຢບ 1:7.
*ຂ* 2 ນຟ 28:19–23; ຄພ 76:28–29.
28 *ກ* ຄນພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.
*ຂ* ຣມ 2:3. ຄນພ ຍຸດຕິທຳ, ຄວາມຍຸດຕິທຳ.
29 *ກ* ມທ 4:7.

33 ດັ່ງນັ້ນ [ກ]ຊາຕານ ຄິດ ຈະ ມີ ອຳນາດເໜືອປະຈັກພະຍານຂອງເຈົ້າໃນຄົນລຸ້ນນີ້, ເພື່ອວ່າວຽກງານຈະບໍ່ອອກມາໃນຄົນລຸ້ນນີ້.

34 ແຕ່ຈົ່ງເບິ່ງ, ນີ້ຄືປັນຍາ, ແລະ ເພາະເຮົາໄດ້ສະແດງ [ກ]ປັນຍາໃຫ້ເຈົ້າເຫັນ, ແລະໄດ້ບັນຊາເຈົ້າກ່ຽວກັບສິ່ງເຫລົ່ານີ້, ສິ່ງໃດທີ່ເຈົ້າຈະເຮັດ, ຢ່າສະແດງມັນຕໍ່ໂລກ ຈົນກວ່າເຈົ້າຈະສຳເລັດວຽກງານການແປເສຍກ່ອນ.

35 ຢ່າປະຫລາດໃຈທີ່ເຮົາໄດ້ກ່າວກັບເຈົ້າວ່າ: ນີ້ຄືປັນຍາ, ຢ່າສະແດງມັນ ຕໍ່ໂລກ—ເພາະເຮົາກ່າວວ່າ ຢ່າສະແດງມັນຕໍ່ໂລກ, ເພື່ອເຈົ້າຈະໄດ້ຮັບການປົກປັກຮັກສາ.

36 ຈົ່ງເບິ່ງ, ເຮົາບໍ່ໄດ້ກ່າວວ່າ ເຈົ້າຈະບໍ່ສະແດງມັນຕໍ່ຄົນຊອບທຳ;

37 ແຕ່ ດັ່ງທີ່ເຈົ້າບໍ່ສາມາດບອກໄດ້ສະເໝີໄປວ່າຄົນໃດ [ກ]ຊອບທຳ, ຫລື ດັ່ງທີ່ເຈົ້າບໍ່ສາມາດບອກໄດ້ສະເໝີໄປວ່າຄົນໃດຊົ່ວຮ້າຍຄົນໃດຊອບທຳ, ສະນັ້ນ ເຮົາກ່າວກັບເຈົ້າວ່າ ຈົ່ງ [ຂ]ສະຫງົບງຽບ ຈົນກວ່າເຮົາຈະເຫັນສົມຄວນທີ່ຈະເຮັດໃຫ້ທຸກສິ່ງທຸກຢ່າງເປັນທີ່ຮູ້ຈັກແກ່ໂລກກ່ຽວກັບເລື່ອງນີ້.

38 ແລະ ບັດນີ້, ຕາມຄວາມຈິງ ເຮົາກ່າວກັບເຈົ້າວ່າ [ກ]ເລື່ອງລາວຂອງສິ່ງເຫລົ່ານັ້ນທີ່ເຈົ້າໄດ້ຂຽນ, ຊຶ່ງຫລຸດໄປຈາກມືຂອງເຈົ້າ, ມີຈາລຶກໄວ້ຢູ່ໃນ [ຂ]ແຜ່ນຈາລຶກຂອງນີໄຟ;

39 ແທ້ຈິງແລ້ວ, ແລະ ເຈົ້າຈື່ໄດ້ ມັນກ່າວໃນການຂຽນເຫລົ່ານັ້ນວ່າ ເລື່ອງລາວທີ່ລະອຽດກວ່າກ່ຽວກັບສິ່ງເຫລົ່ານີ້ ມີຢູ່ເທິງແຜ່ນຈາລຶກຂອງນີໄຟ.

40 ແລະ ບັດນີ້, ເພາະ ເລື່ອງລາວ ຊຶ່ງຈາລຶກໄວ້ເທິງແຜ່ນຈາລຶກຂອງນີໄຟລະອຽດກວ່າກ່ຽວກັບສິ່ງເຫລົ່ານີ້, ໃນຄວາມສະຫລຽວສະຫລາດຂອງເຮົາ, ເຮົາຈະນຳມັນອອກມາໃຫ້ຜູ້ຄົນຮູ້ຈັກ—

41 ສະນັ້ນ, ເຈົ້າຈົ່ງແປອັກຂະລະທີ່ຢູ່ເທິງ [ກ]ແຜ່ນຈາລຶກຂອງນີໄຟ, ລົງໄປຈົນເຈົ້າມາເຖິງການປົກຄອງຂອງກະສັດເບັນຢາມິນ, ຫລື ຈົນກວ່າເຈົ້າມາເຖິງບ່ອນທີ່ເຈົ້າໄດ້ແປ, ຊຶ່ງເຈົ້າໄດ້ສະຫງວນໄວ້;

42 ແລະ ຈົ່ງເບິ່ງ, ເຈົ້າຈົ່ງພິມມັນເປັນບັນທຶກຂອງນີໄຟ; ແລະ ເຮົາຈະເຮັດໃຫ້ຜູ້ຄົນທີ່ໄດ້ປ່ຽນແປງຖ້ອຍຄຳຂອງເຮົາສັບສົນດັ່ງນັ້ນ.

43 ເຮົາຈະບໍ່ຍອມໃຫ້ພວກເຂົາທຳລາຍວຽກງານຂອງເຮົາ; ແທ້ ຈິງແລ້ວ, ເຮົາຈະສະແດງໃຫ້ພວກເຂົາເຫັນວ່າ ຄວາມສະຫລຽວສະຫລາດຂອງເຮົາແມ່ນຍິ່ງໃຫຍ່ກວ່າເລ່ຫລ່ຽມຂອງມານ.

44 ຈົ່ງເບິ່ງ, ພວກເຂົາມີພຽງພາກສ່ວນດຽວ, ຫລື ມີການຫຍໍ້ຂອງເລື່ອງລາວຂອງນີໄຟເທົ່ານັ້ນ.

45 ຈົ່ງເບິ່ງ, ມີຫລາຍສິ່ງຫລາຍຢ່າງທີ່ຈາລຶກໄວ້ຢູ່ເທິງແຜ່ນຈາລຶກຂອງນີໄຟ ຊຶ່ງໃຫ້ຄວາມເຂົ້າໃຈຫລາຍຂຶ້ນກ່ຽວກັບພຣະກິດຕິຄຸນຂອງເຮົາ; ສະນັ້ນ, ມັນເປັນຄວາມສະຫລຽວສະຫລາດຂອງເຮົາ ທີ່ເຈົ້າຈະແປພາກສ່ວນທຳອິດຂອງອັກຂະລະຂອງນີໄຟ, ແລະ ສົ່ງອອກໄປໃນວຽກງານນີ້.

---

33 *ກ* ຄມພ ມານ.
34 *ກ* ຄມພ ສະຕິປັນຍາ.
37 *ກ* ມທ 23:28.
*ຂ* ອພຍ 14:14.
38 *ກ* ໃນບົດຄຳນຳຂອງພຣະຄຳພີມໍມອນຊຸດທຳອິດ, ສາດສະດາໄດ້ອະທິບາຍວ່າ ໜັງສື 116 ໜ້າທີ່ໄດ້ເສຍໄປ ຖືກແປຈາກພາກສ່ວນທີ່ເອີ້ນວ່າ "ໜັງສືລີໄຮ."
*ຂ* ຄມພ ແຜ່ນຈາລຶກ.
41 *ກ* ຄມ 1:3–7.

46 ແລະ, ຈົ່ງ ເບິ່ງ, ສ່ວນ ທີ່ ເຫລືອ ຢູ່ ທັງ
ໝົດ ຂອງ [ກ]ວຽກ ງານ ນີ້ ບັນ ຈຸ ພາກ ສ່ວນ
ເຫລົ່າ ນັ້ນ ທັງ ໝົດ ຂອງ [ຂ]ພຣະ ກິດ ຕິ ຄຸນ
ຂອງເຮົາ ຊຶ່ງບັນດາສາດສະດາຜູ້ບໍລິສຸດ
ຂອງເຮົາ, ແທ້ຈິງແລ້ວ, ແລະ ສານຸສິດຂອງ
ເຮົານຳອີກ, ໄດ້ມີຄວາມ [ຄ]ປາດຖະໜາໃນ
ຄຳອະ ທິ ຖານ ຂອງ ເຂົາ ເຈົ້າ ຢາກ ໃຫ້ ມັນ
ອອກມາສູ່ຄົນພວກນີ້.

47 ແລະ ເຮົາໄດ້ກ່າວກັບເຂົາເຈົ້າວ່າ ມັນ
ຈະຖືກ [ກ]ມອບໃຫ້ເຂົາເຈົ້າຕາມ [ຂ]ສັດທາໃນ
ຄຳອະທິຖານຂອງເຂົາເຈົ້າ.

48 ແທ້ ຈິງ ແລ້ວ, ແລະ ນີ້ຄືສັດທາຂອງ
ເຂົາເຈົ້າ—ວ່າພຣະກິດຕິຄຸນຂອງເຮົາ, ຊຶ່ງ
ເຮົາໄດ້ມອບໃຫ້ເຂົາເຈົ້າ ເພື່ອເຂົາເຈົ້າຈະ
ໄດ້ສັ່ງສອນໃນວັນເວລາຂອງເຂົາເຈົ້າ ຈະ
ອອກ ມາ ຫາ ພີ່ ນ້ອງ ຂອງ ເຂົາ ເຈົ້າ [ກ]ຊາວ
ເລມັນ, ແລະ ທຸກຄົນທີ່ໄດ້ກາຍເປັນຊາວ
ເລມັນ ເພາະ ການ ແຕກ ແຍກ ຂອງ ພວກ
ເຂົາ.

49 ບັດ ນີ້, ນີ້ ຍັງ ບໍ່ ໝົດ—ສັດທາ ໃນ ຄຳ
ອະທິຖານຂອງເຂົາເຈົ້າແມ່ນວ່າ ຄວນເຮັດ
ໃຫ້ພຣະກິດຕິຄຸນນີ້ເປັນທີ່ຮູ້ຈັກນຳອີກ, ຖ້າ
ຫາກເປັນໄປໄດ້ວ່າ ປະຊາຊາດອື່ນຈະມາ
ຄອບຄອງແຜ່ນດິນນີ້;

50 ແ ລະ ດັ່ງນັ້ນ ເຂົາ ເຈົ້າ ໄດ້ ໃຫ້ ພອນ
ໄວ້ ເທິງ ແຜ່ນ ດິນ ນີ້ ໃນ ຄຳອະທິ ຖານ ຂອງ
ເຂົາ ເຈົ້າ, ວ່າ ຜູ້ ໃດ ກໍ ຕາມ ທີ່ ເຊື່ອ ໃນ ພຣະ
ກິດຕິຄຸນນີ້ ໃນແຜ່ນດິນນີ້ຈະມີຊີວິດນິລັນ
ດອນ;

51 ແທ້ ຈິງ ແລ້ວ, ວ່າ ມັນ ຈະ ມີ ໃຫ້ ຢ່າງ
ເປັນ ອິດສະ ລະ ແກ່ ຄົນ ທັງ ປວງ ບໍ່ ວ່າ ຈະ
ເປັນປະຊາຊາດໃດ, ຕະກຸນໃດ, ພາສາໃດ
ຫລື ຜູ້ຄົນໃດກໍຕາມ.

52 ແລ ະ ບັດ ນີ້, ຈົ່ງ ເບິ່ງ, ຕາມ ສັດທາ
ໃນຄຳອະທິຖານຂອງເຂົາເຈົ້າ ເຮົາຈະນຳ
ພາກສ່ວນນີ້ຂອງພຣະກິດຕິຄຸນຂອງເຮົາ
ໄປສູ່ຄວາມຮູ້ຂອງຜູ້ຄົນຂອງເຮົາ. ຈົ່ງເບິ່ງ,
ເຮົາຈະບໍ່ນຳມັນໄປເພື່ອທຳລາຍສິ່ງທີ່ເຂົາ
ໄດ້ຮັບແລ້ວ, ແຕ່ເພື່ອເສີມສ້າງໃສ່ຕື່ມ.

53 ແລະ ດ້ວຍເຫດນີ້ ເຮົາຈຶ່ງໄດ້ກ່າວວ່າ:
ຖ້າຄົນລຸ້ນນີ້ບໍ່ເຮັດໃຈແຂງກະດ້າງ, ແລ້ວ
ເຮົາຈະ ສະຖາປະນາສາດສະໜາຈັກຂອງ
ເຮົາຂຶ້ນໃນທ່າມກາງພວກເຂົາ.

54 ບັດນີ້ ເຮົາບໍ່ໄດ້ກ່າວເລື່ອງນີ້ເພື່ອທຳ
ລາຍ ສາດ ສະ ໜາ ຈັກ ຂອງ ເຮົາ, ແຕ່ ເຮົາ
ກ່າວເລື່ອງນີ້ເພື່ອເສີມສ້າງ ສາດສະໜາຈັກ
ຂອງເຮົາ;

55 ສະນັ້ນ, ຜູ້ໃດກໍຕາມທີ່ເປັນຂອງສາດ
ສະໜາຈັກຂອງເຮົາບໍ່ຈຳເປັນຕ້ອງ [ກ]ຢ້ານ,
ເພາະຄົນເຊັ່ນນັ້ນຈະ [ຂ]ໄດ້ຮັບ [ຄ]ອານາຈັກ
ສະຫວັນເປັນມູນມໍລະດົກ.

56 ແຕ່ແມ່ນຄົນທີ່ບໍ່ [ກ]ຢ້ານກົວເຮົາ, ທັງບໍ່
ຮັກສາບັນຍັດຂອງເຮົາ ແຕ່ໄດ້ສ້າງ [ຂ]ສາດ
ສະໜາຈັກຂຶ້ນເພື່ອຫາ [ຄ]ຜົນປະໂຫຍດໃຫ້
ແກ່ຕົນເອງ, ແທ້ຈິງແລ້ວ, ແລະ ທຸກຄົນທີ່
ເຮັດຄວາມຊົ່ວ ແລະ ສ້າງອານາຈັກຂອງ
ມານຂຶ້ນ—ແທ້ຈິງແລ້ວ, ຕາມຈິງ, ຕາມຈິງ
ແລ້ວ, ເຮົາກ່າວກັບເຈົ້າ, ວ່າເຂົາຄືຜູ້ທີ່ເຮົາ
ຈະລົບກວນ, ແລະ ເຮັດໃຫ້ຕົວສັ່ນ ແລະ
ຫວັ່ນໄຫວເຂົ້າໄປຈົນເຖິງໃຈກາງ.

---

46 *ກ* ຄມພ ພຣະຄຳພີມໍມອນ.
*ຂ* ຄມພ ພຣະກິດຕິຄຸນ.
*ຄ* ອນ 1:12–18; ມມ 8:24–26; 9:34–37.
47 *ກ* 3 ນຟ 5:13–15; ຄພ 3:19–20.
*ຂ* ຄມພ ສັດທາ.
48 *ກ* ມຣນ 10:1–5; ຄພ 109:65–66.
55 *ກ* ຄມພ ຢ້ານກົວ, ຄວາມຢ້ານກົວ.
*ຂ* ມທ 5:10.
*ຄ* ຄມພ ອານາຈັກຂອງ ພຣະເຈົ້າ ຫລື ອາ ນາຈັກສະຫວັນ.
56 *ກ* ປຍຈ 12:13–14.
*ຂ* ຄມພ ມານ—ສາດສະ ໜາຈັກຂອງມານ.
*ຄ* 4 ນຟ 1:26.

57 ຈົ່ງເບິ່ງ, ເຮົາຄືພຣະເຢຊູຄຣິດ, [ກ]ພຣະ
ບຸດ ຂອງ ພຣະ ເຈົ້າ. ເຮົາ ໄດ້ມາ ຫາ ຜູ້ ຄົນ
ຂອງເຮົາ, ແລະ ຜູ້ຄົນຂອງເຮົາບໍ່ໄດ້ຮັບ
ເອົາເຮົາ.
58 ເຮົາຄື [ກ]ຄວາມສະຫວ່າງຊຶ່ງສ່ອງແສງ
ຢູ່ໃນຄວາມມືດ, ແລະ ຄວາມມືດບໍ່ເຂົ້າໃຈ
ມັນເລີຍ.
59 ເຮົາ ຄື ຜູ້ ທີ່ ໄດ້ ກ່າວ— ເຮົາ ມີ [ກ]ແກະ
[ຂ]ອື່ນອີກ ຊຶ່ງບໍ່ເປັນ ຂອງຝູງນີ້—ກັບສານຸ
ສິດຂອງເຮົາ, ແລະ ຫລາຍຄົນ ແຕ່ບໍ່ມີໃຜ
[ຄ]ເຂົ້າໃຈເຮົາ.
60 ແ ລ ະ ເຮົາ ຈະ ສະແດງ ໃຫ້ ຄົນ ລຸ້ນ
ນີ້ ເຫັນ ວ່າເຮົາ ມີແກະອື່ນອີກ, ແລະ ວ່າ
ເຂົາເປັນຕະກຸນໜຶ່ງຂອງ [ກ]ເຊື້ອສາຍຂອງ
ຢາໂຄບ;
61 ແລະ ເຮົາ ຈະ ນຳ ວຽກ ງານ ອັນ ໜ້າ
ອັດ ສະ ຈັນຂອງເຂົາອອກມາສູ່ຄວາມ ສະ
ຫວ່າງ, ຊຶ່ງເຂົາໄດ້ເຮັດໃນນາມຂອງເຮົາ;
62 ແທ້ຈິງແລ້ວ, ແລະ ເຮົາຈະນຳພຣະ
ກິດ ຕິ ຄຸນ ຂອງ ເຮົາ ຊຶ່ງປະ ຕິ ບັດ ແກ່ເຂົາ
ອອກມາສູ່ຄວາມສະຫວ່າງນຳອີກ, ແລະ,
ຈົ່ງເບິ່ງ, ເຂົາຈະບໍ່ປະຕິເສດສິ່ງທີ່ເຈົ້າໄດ້
ຮັບ, ແຕ່ເຂົາຈະເສີມສ້າງມັນຂຶ້ນ, ແລະ ຈະ
ນຳຫລັກທຳຈິງແທ້ຂອງ [ກ]ຄຳສອນຂອງເຮົາ
ອອກມາສູ່ຄວາມສະຫວ່າງ, ແທ້ຈິງແລ້ວ,
ແລະ ຄຳສອນດຽວຊຶ່ງຢູ່ໃນເຮົາ.
63 ແລະ ເຮົາເຮັດສິ່ງນີ້ ເພື່ອເຮົາຈະໄດ້
ສະຖາປະນາພຣະກິດຕິຄຸນຂອງເຮົາຂຶ້ນ,
ເພື່ອຈະບໍ່ມີການຂັດ ແຍ້ງກັນຫລາຍ; ແທ້
ຈິງແລ້ວ, [ກ]ຊາຕານຈະຍຸຍົງໃຈຂອງຜູ້ຄົນ
ໃຫ້ມີ [ຂ]ການຂັດແຍ້ງກັນກ່ຽວກັບຫລັກທຳ
ຂອງຄຳສອນຂອງເຮົາ; ແລະ ໃນເລື່ອງ
ເຫລົ່ານີ້ ເຂົາ ເຮັດ ຜິດ ພາດ, ເພາະ ເຂົາ
[ຄ]ບິດເບືອນຂໍ້ພຣະຄຳພີ ແລະ ບໍ່ເຂົ້າໃຈ
ມັນ.
64 ສະນັ້ນ, ເຮົາ ຈະ ເປີດ ຄວາມ ລຶກ ລັບ
ອັນຍິ່ງໃຫຍ່ນີ້ອອກແກ່ເຂົາ;
65 ເພາະ, ຈົ່ງ ເບິ່ງ, ເຮົາຈະ [ກ]ເຕົ້າ ໂຮມ
ເຂົາດັ່ງແມ່ໄກ່ເຕົ້າໂຮມລູກໄກ່ຂອງມັນໄວ້
ໃຕ້ປີກຂອງມັນ, ຖ້າ ເຂົາຈະບໍ່ເຮັດໃຈແຂງ
ກະດ້າງ;
66 ແທ້ຈິງແລ້ວ, ຖ້າເຂົາປາດຖະໜາທີ່
ຈະ ມາ, ເຂົາກໍມາໄດ້, ແລະ ຮັບເອົາ [ກ]ນ້ຳ
ແຫ່ງຊີວິດຢ່າງມີອິດສະລະ.
67 ຈົ່ງ ເບິ່ງ, ນີ້ ຄື ຄຳ ສອນ ຂອງ ເຮົາ—
ຄົນໃດກໍຕາມທີ່ກັບໃຈ ແລະ [ກ]ມາຫາເຮົາ,
ຄົນໆນັ້ນກໍເປັນ [ຂ]ສາດສະໜາຈັກຂອງເຮົາ.
68 ຄົນໃດກໍຕາມ ທີ່ [ກ]ປະ ກາດຫລາຍ
ກວ່າ ຫລື ໜ້ອຍກວ່ານີ້, ຄົນໆນັ້ນບໍ່ແມ່ນ
ຂອງເຮົາ, ແຕ່ [ຂ]ຕໍ່ຕ້ານເຮົາ; ສະນັ້ນ ເຂົາຈຶ່ງ
ບໍ່ເປັນສາດສະໜາຈັກຂອງເຮົາ.
69 ແລະ ບັດນີ້, ຈົ່ງເບິ່ງ, ຄົນໃດກໍຕາມ
ທີ່ເປັນສາດສະໜາຈັກຂອງເຮົາ, ແລະ ອົດ
ທົນຕໍ່ສາດສະໜາຈັກຂອງເຮົາຈົນເຖິງທີ່
ສຸດ, ຄົນໆນັ້ນເຮົາຈະສະຖາປະນາໄວ້ເທິງ
[ກ]ດານຫີນຂອງເຮົາ, ແລະ [ຂ]ປະຕູນະລົກຈະ
ເອົາຊະນະເຂົາບໍ່ໄດ້.
70 ແລະ ບັດນີ້, ຈົ່ງຈື່ຈຳພຣະຄຳຂອງ

57 *ກ* ຣມ 1:4.
58 *ກ* ຢຮ 10:16.
59 *ກ* ຄພ 6:21.
*ຂ* ຄມພ ຜູ້ລ້ຽງທີ່ດີ.
*ຄ* 3 ນຟ 15:16–18.
60 *ກ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
62 *ກ* 3 ນຟ 11:31–40.
63 *ກ* ຄມພ ມານ.
*ຂ* ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຄ* 2 ປຕ 3:16.
65 *ກ* ລກ 13:34; 3 ນຟ 10:4–6; ຄພ 43:24.
66 *ກ* ຄມພ ນ້ຳທີ່ປະກອບ ດ້ວຍຊີວິດ.
67 *ກ* ມທ 11:28–30.
*ຂ* ຄມພ ສາດສະໜາຈັກ ຂອງພຣະເຢຊູຄຣິດ.
68 *ກ* 3 ນຟ 11:40.
*ຂ* ລກ 11:23.
69 *ກ* ຄມພ ຫີນ.
*ຂ* ມທ 16:18; 2 ນຟ 4:31–32; ຄພ 17:8; 128:10.

ພຣະ ອົງ ຜູ້ ຊຶ່ງ ເປັນ ຊີ ວິດ ແລະ [ກ]ຄວາມ
ສະຫວ່າງຂອງໂລກ, ພຣະຜູ້ໄຖ່ຂອງເຈົ້າ,
[ຂ]ພຣະຜູ້ເປັນເຈົ້າຂອງເຈົ້າ ແລະ ພຣະເຈົ້າ
ຂອງເຈົ້າ. ອາແມນ.

## ພາກທີ 11

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ໄຮຣຳ ສະມິດ ອ້າຍຂອງເພິ່ນ, ທີ່ ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນພຶດສະພາ 1829. ການເປີດເຜີຍນີ້ໄດ້ຮັບຜ່ານອູລີມ ແລະ ທູມມີມ ໃນການຕອບຕໍ່ຄຳອ້ອນວອນ ແລະ ຄຳຖາມຂອງໂຈເຊັບ. ປະຫວັດຂອງໂຈເຊັບ ສະມິດ ແນະນຳວ່າ ໄດ້ຮັບການເປີດເຜີຍນີ້ຫລັງຈາກການຟື້ນຟູຖານະປະໂລຫິດແຫ່ງອາໂຣນ.*

*1–6, ຜູ້ທຳງານໃນສວນອະງຸ່ນຈະໄດ້ຮັບຄວາມລອດ; 7–14, ໃຫ້ສະແຫວງຫາປັນຍາ, ປະກາດການກັບໃຈ, ໄວ້ວາງໃຈໃນພຣະວິນຍານ; 15–22, ໃຫ້ຮັກສາພຣະບັນຍັດ, ແລະ ສຶກສາພຣະຄຳຂອງພຣະຜູ້ເປັນເຈົ້າ; 23–27, ບໍ່ປະຕິເສດພຣະວິນຍານແຫ່ງການເປີດເຜີຍ ແລະ ການທຳນາຍ; 28–30, ຜູ້ຮັບເອົາພຣະຄຣິດກາຍເປັນບຸດຂອງພຣະເຈົ້າ.*

1 [ກ]ວຽກ ງານ ອັນຍິ່ງ ໃຫຍ່ ແລະ ໜ້າ
ອັດສະຈັນພວມຈະອອກມາສູ່ລູກຫລານ
ມະນຸດ.
2 ຈົ່ງເບິ່ງ, ເຮົາຄືພຣະເຈົ້າ; ຈົ່ງ [ກ]ເອົາໃຈ
ໃສ່ ຕໍ່ [ຂ]ຄຳຂອງເຮົາ, ຊຶ່ງມີຊີວິດ ແລະ ມີ
[ຄ]ພະລັງ, [ງ]ແຫລມຄົມຫລາຍກວ່າດາບສອງ
ຄົມ, ຊຶ່ງຈະແຍກທັງຂໍ້ຕໍ່ ແລະ ໄຂໃນກະ
ດູກອອກຈາກກັນ; ສະນັ້ນຈົ່ງເອົາໃຈໃສ່ຕໍ່
ຄຳຂອງເຮົາ.
3 ຈົ່ງເບິ່ງ, ທົ່ງກໍ [ກ]ຂາວພ້ອມແລ້ວທີ່ຈະ
ເກັບກ່ຽວ; ສະນັ້ນ, ຜູ້ໃດພ້ອມແລ້ວທີ່ຈະ
ເກັບກ່ຽວ, ກໍໃຫ້ເຂົາເດ່ກ່ຽວຂອງເຂົາອອກ
ໄປດ້ວຍສຸດພະລັງຂອງເຂົາ, ແລະ ເກັບ
ກ່ຽວໃນຂະນະທີ່ຍັງເວັນຢູ່, ເພື່ອເຂົາຈະໄດ້
[ຂ]ສະສົມຄວາມລອດ [ຄ]ອັນເປັນນິດໄວ້ໃຫ້
ແກ່ຈິດວິນຍານຂອງເຂົາໃນອານາຈັກຂອງ
ພຣະເຈົ້າ.
4 ແທ້ ຈິງ ແລ້ວ, ຄົນ ໃດ ກໍ ຕາມ ທີ່ ຈະ
ເດ່ [ກ]ກ່ຽວ ຂອງ ຕົນ ອອກ ໄປ ແລະ ເກັບ
ກ່ຽວ, ຄົນໆນັ້ນ ແມ່ນຖືກເອີ້ນ ຈາກພຣະ
ເຈົ້າ.
5 ສະນັ້ນ, ຖ້າຫາກເຈົ້າ [ກ]ໝັ່ນຂໍຈາກເຮົາ
ເຈົ້າກໍຈະໄດ້ຮັບ; ຖ້າເຈົ້າໝັ່ນເຄາະ ແລ້ວ
ຈະມີຜູ້ໄຂປະຕູໃຫ້ເຈົ້າ.
6 ບັດນີ້, ດັ່ງທີ່ເຈົ້າໄດ້ຂໍ, ຈົ່ງເບິ່ງ, ເຮົາ
ກ່າວກັບເຈົ້າວ່າ ຈົ່ງຮັກສາບັນຍັດຂອງ
ເຮົາ, ແລະ ສະແຫວງຫາທີ່ຈະນຳ ແລະ
ສະຖາປະນາອຸດົມການຂອງ [ກ]ຊີໂອນ.

---

70 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ຄມພ ພຣະເຢຊູຄຣິດ.
**11** 1 *ກ* ອຊຢ 29:14; ຄພ 4. ຄມພ ການຟື້ນຟູພຣະກິດຕິຄຸນ.
2 *ກ* 1 ນຟ 15:23–25; ຄພ 1:14; 84:43–45.
*ຂ* ຮຣ 4:12.
*ຄ* ແອວ 4:19; 31:5.
*ງ* ຮລມ 3:29–30; ຄພ 6:2.
3 *ກ* ຄພ 12:3.
*ຂ* ລກ 18:22; ຮລມ 5:8.
*ຄ* 1 ຕມທ 6:19.
4 *ກ* ພນມ 14:15; ຄພ 14:3–4.
5 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
6 *ກ* ອຊຢ 52:7–8; ຄພ 66:11. ຄມພ ຊີໂອນ.

7 ຢ່າ ສະແຫວງ ຫາ ^ກ^ຄວາມ ຮັ່ງ ມີ ແຕ່
ຈົ່ງສະແຫວງຫາ ^ຂ^ປັນຍາ, ແລະ ຈົ່ງເບິ່ງ,
ຄວາມລຶກລັບຂອງພຣະເຈົ້າ ຈະເປີດອອກ
ແກ່ເຈົ້າ, ແລະ ຈາກນັ້ນຈະເຮັດໃຫ້ເຈົ້າຮັ່ງ
ມີ. ຈົ່ງເບິ່ງ, ຄົນທີ່ມີຊີວິດນິລັນດອນເປັນຄົນ
ຮັ່ງມີ.
8 ຕາມ ຈິງ, ຕາມ ຈິງ ແລ້ວ, ເຮົາ ກ່າວ
ກັບ ເຈົ້າ, ແມ່ນ ແຕ່ ເຈົ້າປາດຖະ ໜາ ຈາກ
ເຮົາ ສັນ ໃດ ມັນ ຈະ ເປັນ ໄປ ກັບ ເຈົ້າ ສັນ
ນັ້ນ; ແລະ ຖ້າຫາກເຈົ້າປາດຖະໜາ, ເຈົ້າ
ຈະ ເປັນທາງແຫ່ງການເຮັດຄວາມດີຢ່າງ
ຫລວງຫລາຍໃນຄົນລຸ້ນນີ້.
9 ຢ່າ ^ກ^ກ່າວສິ່ງໃດນອກຈາກ ^ຂ^ການກັບ
ໃຈ ແກ່ຄົນລຸ້ນນີ້; ຈົ່ງຮັກສາບັນຍັດຂອງ
ເຮົາ, ແລະ ຊ່ວຍ ນຳ ວຽກງານ ຂອງ ເຮົາ
ອອກ ມາ, ^ຄ^ຕາມ ບັນ ຍັດ ຂອງ ເຮົາ, ແລະ
ເຈົ້າຈະໄດ້ຮັບພອນ.
10 ຈົ່ງ ເບິ່ງ ເຈົ້າ ມີ ^ກ^ຂອງປະທານ, ຫລື
ເຈົ້າ ຈະ ມີ ຂອງ ປະທານ ຖ້າເຈົ້າປາດຖະ
ໜາມັນຈາກເຮົາດ້ວຍສັດທາ, ດ້ວຍຫົວໃຈ
ທີ່ ^ຂ^ຊື່ສັດ, ເຊື່ອໃນອຳນາດຂອງພຣະເຢຊູ
ຄຣິດ, ຫລື ໃນອຳນາດຂອງເຮົາ ຊຶ່ງກ່າວ
ກັບເຈົ້າ;
11 ເພາະ, ຈົ່ງເບິ່ງ, ນີ້ຄືເຮົາທີ່ກ່າວ; ຈົ່ງ
ເບິ່ງ, ເຮົາຄື ^ກ^ຄວາມສະຫວ່າງ ຊຶ່ງສ່ອງໃນ
ຄວາມມືດ, ແລະ ໂດຍ ^ຂ^ອຳນາດຂອງເຮົາ,
ເຮົາມອບຖ້ອຍຄຳເຫລົ່ານີ້ໃຫ້ແກ່ເຈົ້າ.
12 ແລະ ບັດນີ້, ຕາມຈິງ, ຕາມຈິງແລ້ວ,
ເຮົາ ກ່າວ ກັບ ເຈົ້າ, ຈົ່ງ ^ກ^ໄວ້ວາງໃຈໃນ
^ຂ^ພຣະວິນຍານນັ້ນ ຊຶ່ງພາໃຫ້ເຮັດຄວາມ
ດີ—ແທ້ຈິງແລ້ວ, ໃຫ້ເຮັດຢ່າງຖືກຕ້ອງ,
ໃຫ້ ^ຄ^ເດີນໄປດ້ວຍ ^ງ^ຄວາມຖ່ອມຕົວ, ໃຫ້
^ຈ^ຕັດສິນຢ່າງຊອບທຳ; ແລະ ນີ້ຄືພຣະວິນ
ຍານຂອງເຮົາ.
13 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ເຈົ້າ, ເຮົາຈະໃຫ້ພຣະວິນຍານສ່ວນໜຶ່ງ
ແກ່ເຈົ້າ, ຊຶ່ງຈະໃຫ້ ^ກ^ຄວາມສະຫວ່າງແກ່
^ຂ^ຄວາມຄິດຂອງເຈົ້າ, ຊຶ່ງຈະເຮັດໃຫ້ຈິດວິນ
ຍານຂອງເຈົ້າເຕັມໄປດ້ວຍ ^ຄ^ຄວາມສຸກ;
14 ແລະ ແລ້ວ ເຈົ້າ ຈະຮູ້ວ່າ, ຫລື ໂດຍ
ສິ່ງນີ້ເຈົ້າຈະຮູ້ວ່າ ທຸກສິ່ງອັນໃດກໍຕາມທີ່
ເຈົ້າປາດຖະໜາຈາກເຮົາ ຊຶ່ງກ່ຽວກັບສິ່ງທີ່
^ກ^ຊອບທຳ, ດ້ວຍສັດທາ ໂດຍທີ່ເຊື່ອໃນເຮົາ
ແລ້ວເຈົ້າຈະໄດ້ຮັບ.
15 ຈົ່ງ ເບິ່ງ, ເຮົາບັນຊາເຈົ້າວ່າ ເຈົ້າບໍ່
ຄວນຄິດວ່າ ເຈົ້າຖືກເອີ້ນໃຫ້ສັ່ງສອນ ຈົນ
ກວ່າເຈົ້າຖືກ ^ກ^ເອີ້ນ.
16 ຈົ່ງລໍຖ້າໄປກ່ອນ, ຈົນກວ່າເຈົ້າມີຄຳ
ຂອງ ເຮົາ, ^ກ^ດານຫີນ ຂອງ ເຮົາ, ສາດສະ
ໜາຈັກຂອງເຮົາ, ແລະ ພຣະກິດຕິຄຸນຂອງ
ເຮົາ, ເພື່ອວ່າເຈົ້າຈະຮູ້ຈັກຄຳສອນຂອງ
ເຮົາຢ່າງແນ່ແທ້.

---

7 *ກ* 1 ກສ 3:11–13; 2 ນຟ 26:31; ຢຄ 2:17–19; ຄພ 38:39.
*ຂ* ຄມພ ສະຕິປັນຍາ.
9 *ກ* ຄພ 19:21–22.
*ຂ* ຄມພ ກັບໃຈ, ການກັບໃຈ.
*ຄ* ຄພ 105:5.
10 *ກ* ຄພ 46:8–12.
*ຂ* ລກ 8:15.
11 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ຄມພ ອຳນາດ.
12 *ກ* ຄພ 84:116. ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
*ຂ* ຣມ 8:1–9; 1 ຢຮ 4:1–6.
*ຄ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ງ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຈ* ມທ 7:1–5; ແອວ 41:14–15.
13 *ກ* ຄພ 76:12.
*ຂ* ຄມພ ຈິດໃຈ.
*ຄ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
14 *ກ* ຄມພ ຊອບທຳ, ຄວາມຊອບທຳ.
15 *ກ* ຫຼຊ 1:5. ຄມພ ສິດອຳນາດ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
16 *ກ* ຄພ 6:34. ຄມພ ຫີນ.

17 ແລະ ເມື່ອນັ້ນ, ຈົ່ງເບິ່ງ, ຕາມຄວາມ
ປາດຖະໜາຂອງເຈົ້າ, ແທ້ຈິງແລ້ວ, ແມ່ນ
ແຕ່ຕາມ ສັດທາຂອງເຈົ້າ ມັນຈະເກີດຂຶ້ນ
ກັບເຈົ້າ.
18 ຈົ່ງ ຮັກ ສາ ບັນ ຍັດ ຂອງ ເຮົາ; ຈົ່ງ
ສະຫງົບງຽບ; ຈົ່ງອ້ອນວອນຕໍ່ພຣະວິນ
ຍານຂອງເຮົາ;
19 ແທ້ ຈິງ ແລ້ວ, ຈົ່ງ [ກ]ແນບ ສະ ໜິດ ຢູ່
ນຳເຮົາດ້ວຍສຸດຫົວໃຈຂອງເຈົ້າ, ເພື່ອວ່າ
ເຈົ້າຈະໄດ້ຊ່ວຍເຫລືອໃນການນຳຄວາມ
ສະຫວ່າງມາສູ່ສິ່ງທີ່ກ່າວມານັ້ນ—ແທ້ຈິງ
ແລ້ວ, ຄືການແປວຽກງານຂອງເຮົາ; ຈົ່ງອົດ
ທົນຈົນກວ່າເຈົ້າຈະສຳເລັດມັນ.
20 ຈົ່ງເບິ່ງ, ນີ້ຄືວຽກງານຂອງເຈົ້າ, ທີ່
ຈະ [ກ]ຮັກສາບັນຍັດຂອງເຮົາ, ແທ້ຈິງແລ້ວ,
ດ້ວຍສຸດພະລັງ, ຄວາມນຶກຄິດ ແລະ ກຳ
ລັງຂອງເຈົ້າ.
21 ຢ່າ ສະແຫວງ ຫາ ທີ່ ຈະ ປະ ກາດ ຄຳ
ຂອງເຮົາ, ແຕ່ກ່ອນອື່ນໝົດ ໃຫ້ສະແຫວງ
[ກ]ຫາຄຳຂອງເຮົາ, ແລະ ເມື່ອນັ້ນ ລີ້ນຂອງ
ເຈົ້າຈະມາຍອອກ; ຈາກນັ້ນ, ຖ້າຫາກເຈົ້າ
ປາດຖະໜາ, ເຈົ້າຈະມີວິນຍານຂອງເຮົາ
ແລະ ຄຳຂອງເຮົາ, ແທ້ຈິງແລ້ວ, ມີອຳນາດ
ຂອງພຣະເຈົ້າໃນການໃຫ້ມະນຸດຍອມຮັບ.
22 ແຕ່ຕອນນີ້ ຈົ່ງສະຫງົບງຽບ; ໃຫ້ເຈົ້າ
ສຶກສາ [ກ]ຄຳຂອງເຮົາ ຊຶ່ງໄດ້ອອກໄປສູ່ລູກ
ຫລານມະນຸດ, ແລະ ໃຫ້ [ຂ]ສຶກສາ [ຄ]ຄຳຂອງ
ເຮົາ ຊຶ່ງຈະອອກມາສູ່ລູກຫລານມະນຸດນຳ
ອີກ, ຫລື ສິ່ງທີ່ພວມແປຢູ່, ແທ້ຈິງແລ້ວ, ຈົນ
ກວ່າເຈົ້າໄດ້ຮັບທຸກສິ່ງ ຊຶ່ງເຮົາຈະ [ງ]ມອບ
ໃຫ້ແກ່ລູກຫລານມະນຸດໃນຄົນລຸ້ນນີ້, ແລະ
ຈາກນັ້ນ ທຸກສິ່ງຈະຖືກຕື່ມໃສ່ໃນນັ້ນ.
23 ຈົ່ງເບິ່ງ ເຈົ້າຄື [ກ]ໄຮຣຳ, ບຸດຂອງເຮົາ;
ຈົ່ງ [ຂ]ສະແຫວງຫາອານາຈັກຂອງພຣະ
ເຈົ້າ, ແລະ ທຸກສິ່ງຈະຖືກຕື່ມໃສ່ຕາມສິ່ງທີ່
ທ່ຽງທຳ.
24 ຈົ່ງ [ກ]ສ້າງເທິງດານຫີນຂອງເຮົາ, ຊຶ່ງ
ເປັນ [ຂ]ພຣະກິດຕິຄຸນຂອງເຮົາ;
25 ຢ່າປະຕິເສດພຣະວິນຍານ ແຫ່ງ
[ກ]ການເປີດເຜີຍ, ຫລື ພຣະວິນຍານແຫ່ງ
[ຂ]ການທຳນາຍ, ເພາະວິບັດແກ່ຄົນທີ່ປະຕິ
ເສດສິ່ງເຫລົ່ານີ້;
26 ສະນັ້ນ, ຈົ່ງ [ກ]ສະສົມມັນໄວ້ໃນໃຈ
ຂອງເຈົ້າ ຈົນກວ່າຈະເຖິງເວລາ ຊຶ່ງໃນ
ຄວາມສະຫລຽວສະຫລາດຂອງເຮົາ ທີ່ເຈົ້າ
ຈະອອກໄປ.
27 ຈົ່ງ ເບິ່ງ, ເຮົາກ່າວ ກັບ ທຸກ ຄົນ ທີ່ ມີ
ຄວາມປາດຖະໜາດີ, ແລະ ໄດ້ [ກ]ເດ່ກ່ຽວ
ຂອງເຂົາອອກໄປ ເພື່ອຈະເກັບກ່ຽວ.
28 ຈົ່ງເບິ່ງ, ເຮົາຄື [ກ]ພຣະ ເຢຊູ ຄຣິດ,
ພຣະບຸດຂອງພຣະເຈົ້າ. ເຮົາຄືຊີວິດ ແລະ
[ຂ]ຄວາມສະຫວ່າງຂອງໂລກ.
29 ເຮົາຄືຜູ້ດຽວກັນນັ້ນທີ່ໄດ້ມາຫາຜູ້ຄົນ
ຂອງເຮົາ ແລະ ຜູ້ຄົນຂອງເຮົາບໍ່ໄດ້ຮັບເອົາ
ເຮົາ;
30 ແຕ່ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ

19 *ກ* ຢຄ 6:5; ຄພ 98:11.
20 *ກ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
21 *ກ* ແອວ 17:2–3; ຄພ 84:85.
22 *ກ* ອສ ພຣະຄຣິສຕະທຳຄຳພີ.
*ຂ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
*ຄ* ອສ ພຣະຄຳພີມໍມອນ.
*ງ* ແອວ 29:8.
23 *ກ* ຈສ—ປ 1:4.
*ຂ* ມທ 6:33.
24 *ກ* ມທ 7:24–27.
*ຂ* ຄມພ ພຣະກິດຕິຄຸນ.
25 *ກ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ພນມ 19:10. ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.
26 *ກ* ພບຍ 11:18; ຄພ 6:20; 43:34; ຈສ—ມ 1:37.
27 *ກ* ຄມພ ວຽກງານເຜີຍແຜ່.
28 *ກ* ຄມພ ພຣະເຢຊູຄຣິດ.
*ຂ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.

ກັບເຈົ້າ, ວ່າຫລາຍຕໍ່ຫລາຍຄົນໄດ້ຮັບເອົາ
ເຮົາສັນໃດ, ຕໍ່ເຂົາເຮົາກໍຈະມອບ [ກ]ຄວາມ
ສາມາດໃຫ້ ເພື່ອກາຍເປັນ [ຂ]ບຸດຂອງພຣະ
ເຈົ້າສັນນັ້ນ, ແມ່ນແຕ່ຕໍ່ເຂົາທີ່ເຊື່ອໃນນາມ
ຂອງເຮົາ. ອາແມນ.

## ບົດທີ 12

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ໂຈເຊັບ ໄນ້ ຜູ້ພໍ່, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນພຶດສະພາ 1829. ໂຈເຊັບ ໄນ້ ເຊື່ອການປະກາດຂອງໂຈເຊັບ ສະມິດ ກ່ຽວກັບວ່າເພິ່ນມີແຜ່ນຈາລຶກຂອງພຣະຄຳພີມໍມອນ ແລະ ວຽກງານການແປທີ່ພວມດຳເນີນຢູ່ ແລະ ໄດ້ມອບອຸປະກອນຫລາຍຢ່າງໃຫ້ໂຈເຊັບ ສະມິດ ແລະ ຜູ້ຂຽນຂອງເພິ່ນ, ຊຶ່ງຊ່ວຍພວກເພິ່ນໃຫ້ສາມາດແປຕໍ່ໄປ. ຕາມການຂໍຮ້ອງຂອງໂຈເຊັບ ໄນ້, ສາດສະດາ ໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການເປີດເຜີຍ.*

*1–6, ຜູ້ທຳງານໃນສວນອະງຸ່ນຈະໄດ້ຮັບຄວາມລອດ; 7–9, ທຸກຄົນທີ່ປາດຖະໜາ ແລະ ເໝາະສົມ ສາມາດຮັບ ໃຊ້ໃນວຽກງານຂອງພຣະຜູ້ເປັນເຈົ້າ.*

1 [ກ] ວຽກ ງານ ອັນ ຍິ່ງ ໃຫຍ່ ແລະ ໜ້າ
ອັດສະຈັນພວມຈະອອກມາສູ່ລູກຫລານ
ມະນຸດ.
2 ຈົ່ງເບິ່ງ, ເຮົາຄືພຣະເຈົ້າ; ຈົ່ງເອົາໃຈໃສ່
ຕໍ່ຄຳຂອງເຮົາ, ຊຶ່ງມີຊີວິດ ແລະ ມີພະລັງ,
ແຫລມຄົມຫລາຍກວ່າດາບສອງຄົມ, ຊຶ່ງ
ຈະແຍກທັງຂໍ້ຕໍ່ ແລະ ໄຂໃນກະດູກອອກ
ຈາກກັນ; ສະນັ້ນຈົ່ງເອົາໃຈໃສ່ຕໍ່ຄຳຂອງ
ເຮົາ.
3 ຈົ່ງ ເບິ່ງ, ທົ່ງ ກໍ ຂາວ ພ້ອມ ແລ້ວ ທີ່ ຈະ
ເກັບກ່ຽວ; ສະນັ້ນ, ຜູ້ໃດພ້ອມແລ້ວທີ່ຈະ
ເກັບກ່ຽວ, ກໍໃຫ້ເຂົາເດ່ກ່ຽວຂອງເຂົາອອກ
ໄປດ້ວຍສຸດພະລັງຂອງເຂົາ, ແລະ ເກັບ
ກ່ຽວໃນຂະນະທີ່ຍັງເວັນຢູ່, ເພື່ອເຂົາຈະ
ໄດ້ສະສົມຄວາມລອດອັນເປັນນິດໄວ້ໃຫ້
ແກ່ຈິດວິນຍານຂອງເຂົາໃນອານາຈັກຂອງ
ພຣະເຈົ້າ.
4 ແທ້ຈິງແລ້ວ, ຄົນໃດກໍຕາມທີ່ຈະເດ່
ກ່ຽວ ຂອງຕົນອອກໄປ ແລະ ເກັບກ່ຽວ,
ຄົນໆນັ້ນແມ່ນຖືກເອີ້ນ ຈາກພຣະເຈົ້າ.
5 ສະນັ້ນ, ຖ້າຫາກເຈົ້າໝັ່ນຂໍຈາກເຮົາ
ເຈົ້າກໍຈະໄດ້ຮັບ; ຖ້າເຈົ້າໝັ່ນເຄາະ ແລ້ວ
ຈະມີຜູ້ໄຂປະຕູໃຫ້ເຈົ້າ.
6 ບັດນີ້, ດັ່ງທີ່ເຈົ້າໄດ້ຂໍ, ຈົ່ງເບິ່ງ, ເຮົາ
ກ່າວກັບເຈົ້າວ່າ ຈົ່ງຮັກສາບັນຍັດຂອງເຮົາ,
ແລະ ສະແຫວງຫາທີ່ຈະນຳອອກມາ ແລະ
ສະຖາປະນາອຸດົມການຂອງຊີໂອນ.
7 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, ແລະ ກັບ
ທຸກຄົນຜູ້ປາດຖະໜາທີ່ຈະນຳວຽກງານນີ້
ອອກມາ ແລະ ສະຖາປະນາມັນຂຶ້ນ;
8 ແລະ ບໍ່ມີໃຜຈະສາມາດຊ່ວຍໃນວຽກ
ງານນີ້ ຍົກເວັ້ນແຕ່ເຂົາຈະ [ກ]ຖ່ອມຕົວ ແລະ
ເຕັມໄປດ້ວຍ [ຂ]ຄວາມຮັກ, ໂດຍມີ [ຄ]ສັດທາ,

30 *ກ* ຢຮ 1:12.
*ຂ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
**12** 1 *ກ* ເບິ່ງ ຄພ 11:1–6 ສຳລັບ ຂໍ້ອ້າງອີງໃສ່ກັບພຣະຄຳພີ ທີ່ຄ້າຍຄືກັນ.
8 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຂ* ຄມພ ຮັກ, ຄວາມຮັກ.
*ຄ* ຄມພ ສັດທາ.

[ງ]ຄວາມ ຫວັງ, ແລະ [ຈ]ຄວາມ ໃຈ ບຸນ, ຍັບ
ຍັ້ງຕົນໃນທຸກສິ່ງ, ບໍ່ວ່າອັນໃດກໍຕາມທີ່ຈະ
ຝາກຝັງໄວ້ໃນການດູແລຂອງເຂົາ.
9 ຈົ່ງ ເບິ່ງ , ເ ຮົາ ເປັນ ຄວາມ ສະ ຫວ່າງ
ແລະ ຊີ ວິດ ຂອງ ໂລກ, ທີ່ ກ່າວ ຄຳ ເຫລົ່າ
ນີ້, ສະ ນັ້ນ ຈົ່ງ ເອົາ ໃຈ ໃສ່ ຈົນ ສຸດ ພະ ລັງ
ຂອງ ເຈົ້າ, ແລະ ຈາກ ນັ້ນ ເຈົ້າ ຈະ ຖືກ ເອີ້ນ.
ອາແມນ.

---

# ພາກທີ 13

*ເລື່ອງລາວທີ່ຖືກຄັດລອກເອົາມາຈາກປະຫວັດຂອງ ໂຈເຊັບ ສະມິດ ບັນຍາຍເຖິງພິທີການແຕ່ງຕັ້ງຂອງສາດສະດາ ແລະ ອໍລີເວີ ຄາວເດີຣີ ສູ່ຖານະປະໂລຫິດແຫ່ງອາໂຣນ ໃກ້ເມືອງຮາມໂມນີ ລັດເພັນໂຊເວເນຍ, ວັນທີ 15 ເດືອນພຶດສະພາ, 1829. ພິທີການແຕ່ງຕັ້ງຖືກກະທຳ ໂດຍມືຂອງທູດຜູ້ປະກາດຕົວເອງວ່າ ເປັນ ໂຢຮັນ, ຜູ້ດຽວກັນກັບທີ່ຖືກເອີ້ນວ່າ ໂຢຮັນບັບຕິສະ ໂຕ ໃນພຣະຄຳພີໃໝ່. ທູດໄດ້ອະທິບາຍວ່າ ເພິ່ນກະທຳພາຍ ໃຕ້ການຊີ້ນຳຂອງເປ ໂຕ, ຢາ ໂກ ໂບ, ແລະ ໂຢຮັນ, ອັກຄະສາວົກໃນສະໄໝບູຮານ, ຜູ້ຖືຂໍກະແຈຂອງຖານະປະ ໂລຫິດຊັ້ນສູງ, ຊຶ່ງເອີ້ນວ່າຖານະປະ ໂລຫິດແຫ່ງເມນຄີເສເດັກ. ໂຈເຊັບ ແລະ ອໍລີເວີໄດ້ຮັບຄຳສັນຍາວ່າ ເມື່ອເຖິງເວລາ ຖານະປະ ໂລຫິດຊັ້ນສູງນີ້ຈະຖືກມອບ ໃຫ້ແກ່ພວກເພິ່ນ. (ເບິ່ງ ພາກທີ 27:7–8, 12.)*

*ຂໍກະແຈ ແລະ ອຳນາດຂອງຖານະປະໂລຫິດແຫ່ງອາໂຣນໄດ້ຖືກຕັ້ງໄວ້.*

1 ແກ່ພວກທ່ານ ເພື່ອນຜູ້ຮັບໃຊ້ຮ່ວມກັບ
ຂ້າພະເຈົ້າ, ໃນພຣະນາມຂອງພຣະເມຊີ
ອາ ຂ້າພະເຈົ້າຂໍ [ກ]ມອບ [ຂ]ຖານະປະໂລຫິດ
ແຫ່ງອາໂຣນ, ຊຶ່ງຖືຂໍກະແຈແຫ່ງການປະຕິ
ບັດຂອງ [ຄ]ເຫລົ່າທູດ, ແລະ ຂອງພຣະກິດ
ຕິຄຸນແຫ່ງ [ງ]ການກັບໃຈ, ແລະ ຂອງການ
[ຈ]ບັບຕິສະມາໂດຍການລົງໄປໃນນ້ຳໝົດ
ທັງຕົວເພື່ອການປົດບາບ; ແລະ ສິ່ງນີ້ຈະບໍ່
ຖືກເອົາໄປຈາກແຜ່ນດິນໂລກອີກຈັກເທື່ອ,
ຈົນກວ່າ [ສ]ພວກບຸດຂອງເລວີຈະຖວາຍ
ເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຄືນອີກໃນ
[ຊ]ຄວາມຊອບທຳ.

---

8 *ງ* ຄມພ ຫວັງ, ຄວາມຫວັງ.
*ຈ* ຄມພ ໃຈບຸນ, ຄວາມໃຈບຸນ.
**13** 1 *ກ* ຈສ—ປ 1:68–75. ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* ຄພ 27:8; 84:18–34. ຄມພ ຖານະປະໂລຫິດແຫ່ງອາໂຣນ.
*ຄ* ຄມພ ທູດ, ເທວະດາ.
*ງ* ຄມພ ກັບໃຈ, ການກັບໃຈ.
*ຈ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ສ* ເບິ່ງ ເລື່ອງລາວຂອງອໍລີເວີ ຄາວເດີຣີ ກ່ຽວກັບການຟື້ນຟູຖານະປະໂລຫິດແຫ່ງອາໂຣນ ຢູ່ໃນທ້າຍ ໂຈເຊັບ ສະມິດ—ປະຫວັດສາດ. ພບຍ 10:8; 1 ຂຄ 6:48; ຄພ 128:24.
*ຊ* ຄມພ ຊອບທຳ, ຄວາມຊອບທຳ.

# ພາກທີ 14

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ເດວິດ ວິດເມີ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນມິຖຸນາ 1829. ຄອບຄົວວິດເມີ ມີຄວາມສົນໃຈຫລາຍນຳການແປພຣະຄຳພີມໍມອນ. ສາດສະດາໄດ້ພັກຢູ່ບ້ານຂອງພີເຕີ ວິດເມີ ຜູ້ພໍ່ ບ່ອນເພິ່ນໄດ້ອາໄສຢູ່ຈົນກວ່າວຽກງານຂອງການແປສຳເລັດ ແລະ ລິຂະສິດພຣະຄຳພີກໍຮຽບຮ້ອຍ. ລູກຊາຍສາມຄົນຂອງຄອບຄົວວິດເມີ, ຊຶ່ງແຕ່ລະຄົນໄດ້ຮັບປະຈັກພະຍານເຖິງຄວາມຈິງແທ້ແນ່ນອນຂອງວຽກງານ, ມີຄວາມເປັນຫ່ວງເປັນໃຍຫລາຍນຳໜ້າທີ່ສະເພາະຂອງຕົນ. ການເປີດເຜີຍນີ້ ແລະ ການເປີດເຜີຍອີກສອງຢ່າງ ຕິດຕາມພາກນີ້ (ພາກທີ 15 ແລະ 16) ໄດ້ຖືກມອບໃຫ້ເປັນຄຳຕອບຕໍ່ຄຳຖາມ ຜ່ານອຸລິມ ແລະ ທຸມມິມ. ຕໍ່ມາເດວິດ ວິດເມີ ໄດ້ກາຍເປັນຜູ້ໜຶ່ງໃນພະຍານສາມຄົນເຖິງພຣະຄຳພີມໍມອນ.*

*1–6, ຜູ້ທຳງານໃນສວນອະງຸ່ນຈະໄດ້ຮັບຄວາມລອດ; 7–8, ຊີວິດນິລັນດອນເປັນຂອງປະທານອັນຍິ່ງໃຫຍ່ທີ່ສຸດໃນຂອງປະທານຂອງພຣະເຈົ້າ; 9–11, ພຣະຄຣິດໄດ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ.*

1 [a]ວຽກງານ ອັນ ຍິ່ງໃຫຍ່ ແລະ ໜ້າ
ອັດສະຈັນພວມຈະອອກມາສູ່ລູກຫລານ
ມະນຸດ.
2 ຈົ່ງເບິ່ງ, ເຮົາຄືພຣະເຈົ້າ; ຈົ່ງເອົາໃຈໃສ່
ຕໍ່ຄຳຂອງເຮົາ, ຊຶ່ງມີຊີວິດ ແລະ ມີພະລັງ,
ແຫລມຄົມຫລາຍກວ່າດາບສອງຄົມ, ຊຶ່ງ
ຈະແຍກທັງຂໍ້ຕໍ່ ແລະ ໄຂໃນກະດູກອອກ
ຈາກກັນ; ສະນັ້ນຈົ່ງເອົາໃຈໃສ່ຕໍ່ຄຳຂອງ
ເຮົາ.
3 ຈົ່ງ ເບິ່ງ, ທົ່ງ ກໍ ຂາວ ພ້ອມ ແລ້ວ ທີ່ ຈະ
ເກັບກ່ຽວ; ສະນັ້ນ, ຜູ້ໃດພ້ອມແລ້ວທີ່ຈະ
ເກັບກ່ຽວ, ກໍໃຫ້ເຂົາເດ່ກ່ຽວຂອງເຂົາອອກ
ໄປດ້ວຍສຸດພະລັງຂອງເຂົາ, ແລະ ເກັບ
ກ່ຽວໃນຂະນະທີ່ຍັງເວັນຢູ່, ເພື່ອເຂົາຈະ
ໄດ້ສະສົມຄວາມລອດອັນເປັນນິດໄວ້ໃຫ້
ແກ່ຈິດວິນຍານຂອງເຂົາໃນອານາຈັກຂອງ
ພຣະເຈົ້າ.
4 ແທ້ຈິງແລ້ວ, ຄົນໃດກໍຕາມທີ່ຈະເດ່
ກ່ຽວຂອງຕົນອອກໄປ ແລະ ເກັບກ່ຽວ,
ຄົນໆນັ້ນແມ່ນຖືກເອີ້ນ ຈາກພຣະເຈົ້າ.
5 ສະນັ້ນ, ຖ້າຫາກເຈົ້າໝັ່ນຂໍຈາກເຮົາ
ເຈົ້າກໍຈະໄດ້ຮັບ; ຖ້າເຈົ້າໝັ່ນເຄາະ ແລ້ວ
ຈະມີຜູ້ໄຂປະຕູໃຫ້ເຈົ້າ.
6 ຈົ່ງສະແຫວງຫາທີ່ຈະນຳຊີໂອນຂອງ
ເຮົາອອກມາ ແລະ ສະຖາປະນາມັນຂຶ້ນ.
ຈົ່ງຮັກສາບັນຍັດຂອງເຮົາໃນທຸກສິ່ງ.
7 ແລະ, ຖ້າເຈົ້າ [a]ຮັກສາບັນຍັດຂອງເຮົາ
ແລະ [b]ອົດທົນຈົນເຖິງທີ່ສຸດ ເຈົ້າຈະມີ [c]ຊີ
ວິດນິລັນດອນ, ຊຶ່ງເປັນຂອງປະທານອັນ
ຍິ່ງໃຫຍ່ທີ່ສຸດໃນຂອງປະທານທັງໝົດຂອງ
ພຣະເຈົ້າ.
8 ແລະ ເຫດການຈະບັງເກີດຂຶ້ນຄື ຖ້າ
ຫາກເຈົ້າຈະທູນຖາມພຣະບິດາໃນນາມ
ຂອງເຮົາ, ໃນສັດທາທີ່ເຊື່ອ, ແລ້ວເຈົ້າ

**14** 1 *ກ* ເບິ່ງ ຄພ 11:1–6 ສຳລັບຂໍ້ອ້າງອີງໃສ່ກັບພຣະຄຳພີ ທີ່ຄ້າຍຄືກັນ.
7 *ກ* ລລວ 26:3–12; ຢຣ 15:10; ມຊຢ 2:22, 41; ຄພ 58:2.
*ຂ* ຄມພ ອົດທົນ, ຄວາມອົດທົນ.
*ຄ* 2 ນຟ 31:20; ຄພ 6:13. ຄມພ ຊີວິດນິລັນດອນ.

ຈະໄດ້ຮັບ [ກ]ພຣະວິນຍານບໍລິສຸດ, ຊຶ່ງໃຫ້
ເອີ່ຍປາກ, ເພື່ອວ່າເຈົ້າຈະໄດ້ຢືນ [ຂ]ເປັນ
ພະຍານເຖິງສິ່ງທີ່ເຈົ້າທັງຈະ [ຄ]ໄດ້ຍິນ ແລະ
ໄດ້ເຫັນ, ແລະ ເພື່ອວ່າເຈົ້າຈະປະກາດ
ການກັບໃຈແກ່ຄົນລຸ້ນນີ້ນຳອີກ.
9 ຈົ່ງເບິ່ງ, ເຮົາຄື [ກ]ພຣະເຢຊູຄຣິດ, [ຂ]ພຣະ
ບຸດຂອງ [ຄ]ພຣະເຈົ້າຜູ້ຊົງພຣະຊົນຢູ່, ຜູ້ [ງ]ໄດ້
ສ້າງຟ້າສະຫວັນ ແລະ [ຈ]ແຜ່ນດິນໂລກ,
ເປັນ [ສ]ຄວາມສະຫວ່າງ ຊຶ່ງບໍ່ສາມາດຊຸກ
ເຊື່ອງໄວ້ຢູ່ໃນ [ຊ]ຄວາມມືດ;
10 ດັ່ງນັ້ນ, ເຮົາຈະຕ້ອງນຳ [ກ]ຄວາມສົມ
ບູນແຫ່ງພຣະກິດຕິຄຸນຂອງເຮົາອອກມາ
ຈາກ [ຂ]ຄົນຕ່າງຊາດ ໄປສູ່ເຊື້ອສາຍອິດສະ
ຣາເອນ.
11 ແລະ ຈົ່ງ ເບິ່ງ, ເຈົ້າ ຄື ເດວິດ, ແລະ
ເຈົ້າ ຖືກ ເອີ້ນ ໃຫ້ ມາ ຊ່ວຍ; ຊຶ່ງ ສິ່ງ ນັ້ນ ຖ້າ
ຫາກເຈົ້າເຮັດ, ແລະ ຊື່ສັດ, ເຈົ້າຈະໄດ້ຮັບ
ພອນ ທັງທາງຝ່າຍວິນ ຍານ ແລະ ທາງ
ຝ່າຍໂລກ, ແລະ ລາງວັນຂອງເຈົ້າຈະຍິ່ງ
ໃຫຍ່. ອາແມນ.

# ພາກທີ 15

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ຈອນ ວິດເມີ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນມິຖຸນາ 1829 (ເບິ່ງ ຫົວຂໍ້ຂອງ ພາກທີ 14). ຂ່າວສານແມ່ນສ່ວນຕົວ ແລະ ໜ້າປະທັບໃຈຫລາຍ ຊຶ່ງໃນນັ້ນພຣະຜູ້ເປັນເຈົ້າບອກເຖິງສິ່ງທີ່ຈອນ ວິດເມີ ແລະ ພຣະອົງເອງຮູ້ເທົ່ານັ້ນ. ຕໍ່ມາຈອນ ວິດເມີ ໄດ້ກາຍເປັນພະຍານຄົນໜຶ່ງໃນພະຍານແປດຄົນເຖິງພຣະຄຳພີມໍມອນ.*

*1–2, ພຣະພາຫາຂອງພຣະຜູ້ເປັນເຈົ້າມີຢູ່ທົ່ວແຜ່ນດິນໂລກ; 3–6, ການສັ່ງສອນພຣະກິດຕິຄຸນ ແລະ ການຊ່ວຍກູ້ຈິດວິນຍານແມ່ນສິ່ງທີ່ມີຄຸນຄ່າທີ່ສຸດ.*

1 ຈົ່ງເຊື່ອຟັງ, ຜູ້ຮັບໃຊ້ຂອງເຮົາ ຈອນ,
ແລະ ຟັງພຣະຄຳຂອງພຣະເຢຊູຄຣິດ,
ພຣະຜູ້ເປັນເຈົ້າຂອງເຈົ້າ ແລະ ພຣະຜູ້ໄຖ່
ຂອງເຈົ້າ.
2 ເພາະ ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ເຈົ້າ ຢ່າງ
ໜັກ ແໜ້ນ ແລະ ດ້ວຍ [ກ]ອຳນາດ, ເພາະ
ແຂນຂອງເຮົາມີຢູ່ທົ່ວແຜ່ນດິນໂລກ.
3 ແລະ ເຮົາຈະບອກເຈົ້າເຖິງສິ່ງທີ່ບໍ່ມີ
ຄົນໃດຮູ້ ນອກຈາກເຮົາ ແລະ ເຈົ້າ ເທົ່າ
ນັ້ນ—
4 ເພາະ ຫລາຍ ເທື່ອ ເຈົ້າ ປາດ ຖະ ໜາ
ຢາກຮູ້ຈາກເຮົາ ເຖິງສິ່ງທີ່ມີຄຸນຄ່າທີ່ສຸດສຳ
ລັບເຈົ້າ.

8 *ກ* ຄມພ ພຣະວິນຍານບໍລິສຸດ.
*ຂ* ມຊຢ 18:8–10. ຄມພ ພະຍານ.
*ຄ* ເບິ່ງ "ປະຈັກພະຍານຂອງພະຍານສາມຄົນ" ໃນພາກໜ້າຕົ້ນຂອງພຣະຄຳພີມໍມອນ.
9 *ກ* ມຊຢ 4:2; ຄພ 76:20–24.
*ຂ* ຣມ 1:4.
*ຄ* ດນອ 6:26; ແອວ 7:6; ຄພ 20:19.
*ງ* ຢຮ 1:1–3, 14; 3 ນຟ 9:15; ຄພ 45:1. ຄມພ ສ້າງ, ການສ້າງ.
*ຈ* ອຣຣ 4:12, 24–25.
*ສ* 2 ຊມອ 22:29. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຊ* ຄມພ ຄວາມມືດທາງວິນຍານ.
10 *ກ* ຄພ 20:8–9; ຈສ—ປ 1:34.
*ຂ* ຄມພ ຄົນຕ່າງຊາດ.
**15** 2 *ກ* ຣລມ 3:29–30. ຄມພ ອຳນາດ.

5 ຈົ່ງເບິ່ງ, ເຈົ້າເປັນສຸກແລ້ວເພາະສິ່ງນີ້,
ແລະ ເພາະການກ່າວຄຳຂອງເຮົາ ຊຶ່ງເຮົາ
ໄດ້ມອບໃຫ້ແກ່ເຈົ້າ ຕາມບັນຍັດຂອງເຮົາ.
6 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ
ວ່າ ສິ່ງທີ່ມີຄຸນຄ່າທີ່ສຸດ ສຳລັບເຈົ້າແມ່ນ
[ກ]ການປະກາດການກັບໃຈແກ່ຜູ້ຄົນພວກ
ນີ້, ເພື່ອວ່າເຈົ້າຈະໄດ້ນຳຈິດວິນຍານມາ
ຫາເຮົາ, ເພື່ອເຈົ້າຈະໄດ້ [ຂ]ພັກຜ່ອນນຳເຂົາ
ໃນ [ຄ]ອານາຈັກຂອງ [ງ]ພຣະບິດາຂອງເຮົາ.
ອາແມນ.

## ພາກທີ 16

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ພີເຕີ ວິດເມີ ຜູ້ລູກ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນມິຖຸນາ 1829 (ເບິ່ງ ຫົວຂໍ້ຂອງ ພາກທີ 14). ຕໍ່ມາພີເຕີ ວິດເມີ ຜູ້ລູກ ໄດ້ກາຍເປັນພະຍານຄົນໜຶ່ງໃນພະຍານແປດຄົນເຖິງພຣະຄຳພີມໍມອນ.*

*1–2, ແຂນຂອງພຣະຜູ້ເປັນເຈົ້າມີຢູ່ທົ່ວແຜ່ນດິນໂລກ; 3–6, ການສັ່ງສອນພຣະກິດຕິຄຸນ ແລະ ການຊ່ວຍກູ້ຈິດວິນຍານແມ່ນສິ່ງທີ່ມີຄຸນຄ່າທີ່ສຸດ.*

1 ຈົ່ງ [ກ]ເຊື່ອຟັງ, ຜູ້ຮັບໃຊ້ຂອງເຮົາ ພີເຕີ,
ແລະ ຟັງພຣະຄຳຂອງພຣະເຢຊູຄຣິດ,
ພຣະຜູ້ເປັນເຈົ້າຂອງເຈົ້າ ແລະ ພຣະຜູ້ໄຖ່
ຂອງເຈົ້າ.
2 ເພາະຈົ່ງເບິ່ງ, ເຮົາກ່າວກັບເຈົ້າຢ່າງ
ໜັກແໜ້ນ ແລະ ດ້ວຍອຳນາດ, ເພາະແຂນ
ຂອງເຮົາມີຢູ່ທົ່ວແຜ່ນດິນໂລກ.
3 ແລະ ເຮົາຈະບອກເຈົ້າເຖິງສິ່ງທີ່ບໍ່ມີຄົນ
ໃດຮູ້ ນອກຈາກເຮົາ ແລະ ເຈົ້າເທົ່ານັ້ນ—
4 ເພາະຫລາຍເທື່ອ ເຈົ້າປາດຖະໜາ
ຢາກຮູ້ຈາກເຮົາ ເຖິງສິ່ງທີ່ມີຄຸນຄ່າທີ່ສຸດສຳ
ລັບເຈົ້າ.
5 ຈົ່ງເບິ່ງ, ເຈົ້າເປັນສຸກແລ້ວເພາະສິ່ງນີ້,
ແລະ ເພາະການກ່າວຄຳຂອງເຮົາ ຊຶ່ງເຮົາ
ໄດ້ມອບໃຫ້ແກ່ເຈົ້າ ຕາມບັນຍັດຂອງເຮົາ.
6 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ
ວ່າ ສິ່ງທີ່ມີຄຸນຄ່າທີ່ສຸດ ສຳລັບເຈົ້າແມ່ນ
ການປະກາດການກັບໃຈແກ່ຜູ້ຄົນພວກ
ນີ້, ເພື່ອວ່າເຈົ້າຈະໄດ້ນຳຈິດວິນຍານມາ
ຫາເຮົາ, ເພື່ອເຈົ້າຈະໄດ້ພັກຜ່ອນນຳເຂົາ
ໃນອານາຈັກຂອງພຣະບິດາຂອງເຮົາ.
ອາແມນ.

## ພາກທີ 17

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາແກ່ອໍລີເວີ ຄາວເດີຣີ, ເດວິດ ວິດເມີ, ແລະ ມາຕິນ ແຮຣິສ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນມິຖຸນາ 1829,*

---

6 ກ ຄພ 18:15–16.
ຄມພ ວຽກງານເຜີຍແຜ່.
ຂ ຄມພ ພັກຜ່ອນ.
ຄ ຄມພ ອານາຈັກຂອງ ພຣະເຈົ້າ ຫລື ອານາຈັກສະຫວັນ.
ງ ຄມພ ພຣະບິດາຜູ້ສະຖິດຢູ່ໃນສະຫວັນ.

**16** 1 ກ ເບິ່ງ ຄພ 15 ສຳລັບ ຂໍ້ອ້າງອີງໃສ່ກັບພຣະຄຳພີ ທີ່ຄ້າຍຄືກັນ.

*ກ່ອນໄດ້ເຫັນແຜ່ນຈາລຶກທີ່ບັນຈຸພຣະຄຳພີມໍມອນ. ໂຈເຊັບ ແລະ ຜູ້ຂຽນຂອງເພິ່ນ, ອໍລີເວີ ຄາວເດີຣີ, ໄດ້ຮຽນຮູ້ຈາກການແປແຜ່ນຈາລຶກຂອງພຣະຄຳພີມໍມອນວ່າ ພະຍານສາມຄົນ ຈະຖືກເລືອກ (ເບິ່ງ ອີເທີ 5:2–4; 2 ນີໄຟ 11:3; 27:12). ອໍລີເວີ ຄາວເດີຣີ, ເດວິດ ວິດເມີ, ແລະ ມາຕິນ ແຮຣິສ ມີຄວາມປາດຖະໜາທີ່ດົນໃຈທີ່ຈະເປັນພະຍານພິເສດສາມຄົນ. ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າ, ແລະ ໄດ້ຮັບການເປີດເຜີຍນີ້ເປັນຄຳຕອບຜ່ານອູລີມ ແລະ ທຸມມີມ.*

*1–4, ດ້ວຍສັດທາພະຍານສາມຄົນຈະໄດ້ເຫັນແຜ່ນຈາລຶກ ແລະ ສິ່ງອື່ນໆທີ່ສັກສິດ; 5–9, ພຣະຄຣິດສະແດງປະຈັກພະຍານເຖິງຄວາມສັກສິດຂອງພຣະຄຳພີມໍມອນ.*

1 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ເຈົ້າຕ້ອງໄວ້ວາງໃຈຖ້ອຍຄຳຂອງເຮົາ, ຊຶ່ງຖ້າຫາກເຈົ້າເຮັດດ້ວຍຈຸດປະສົງເຕັມທີ່ແຫ່ງໃຈ, ແລ້ວເຈົ້າຈະໄດ້ [ກ]ເຫັນ [ຂ]ແຜ່ນຈາລຶກ, ແລະ ແຜ່ນປົກເອິກນຳອີກ, [ຄ]ດາບຂອງລາບານ, [ງ]ອູລີມ ແລະ ທຸມມີມ, ຊຶ່ງໄດ້ມອບໃຫ້ແກ່ [ຈ]ນ້ອງຊາຍຂອງຢາເຣັດຢູ່ເທິງພູ, ຕອນລາວເວົ້າລົມນຳພຣະຜູ້ເປັນເຈົ້າ [ສ]ໜ້າຕໍ່ໜ້າ, ແລະ ສິ່ງຊີ້ນຳທີ່ [ຊ]ອັດສະຈັນ ຊຶ່ງມອບໃຫ້ແກ່ລີໄຮໃນຂະນະທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານ, ຢູ່ໃກ້ [ຍ]ທະເລແດງ.

2 ແລະ ເປັນດ້ວຍສັດທາຂອງພວກເຈົ້າທີ່ພວກເຈົ້າຈະໄດ້ເຫັນມັນ, ແມ່ນແຕ່ໂດຍສັດທານັ້ນ ຊຶ່ງສາດສະດາໃນສະໄໝບູຮານມີ.

3 ແລະ ຫລັງຈາກພວກເຈົ້າໄດ້ຮັບສັດທາ, ແລະ ໄດ້ເຫັນມັນດ້ວຍຕາຂອງພວກເຈົ້າ, ພວກເຈົ້າຈະ [ກ]ເປັນພະຍານເຖິງສິ່ງເຫລົ່ານັ້ນ, ໂດຍອຳນາດຂອງພຣະເຈົ້າ;

4 ແລະ ສິ່ງນີ້ພວກເຈົ້າຈະເຮັດເພື່ອຜູ້ຮັບໃຊ້ຂອງເຮົາໂຈເຊັບ ສະມິດ, ຜູ້ລູກ, ຈະບໍ່ຖືກທຳລາຍ, ເພື່ອວ່າເຮົາຈະໄດ້ນຳຈຸດປະສົງທີ່ຊອບທຳຂອງເຮົາມາສູ່ລູກຫລານມະນຸດໃນວຽກງານນີ້.

5 ແລະ ພວກເຈົ້າຈະເປັນພະຍານວ່າພວກເຈົ້າໄດ້ເຫັນສິ່ງເຫລົ່ານັ້ນ, ແມ່ນແຕ່ເໝືອນດັ່ງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ໄດ້ເຫັນມັນແລ້ວ; ເພາະເປັນໂດຍອຳນາດຂອງເຮົາທີ່ລາວໄດ້ເຫັນມັນ, ແລະ ເປັນເພາະລາວມີສັດທາ.

6 ແລະ ລາວໄດ້ແປ [ກ]ໜັງສື, ແມ່ນແຕ່ [ຂ]ພາກສ່ວນນັ້ນ ຊຶ່ງເຮົາໄດ້ບັນຊາລາວ, ແລະ ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າຊົງພຣະຊົນຢູ່ສັນໃດ, ສິ່ງນີ້ກໍເປັນຄວາມຈິງສັນນັ້ນ.

7 ດັ່ງນັ້ນ, ພວກເຈົ້າຈຶ່ງໄດ້ຮັບອຳນາດອັນດຽວກັນນັ້ນ, ແລະ ສັດທາອັນດຽວກັນນັ້ນ, ແລະ ຂອງປະທານອັນດຽວກັນນັ້ນຄືກັນກັບລາວ;

**17** 1 *ກ* 2 ນຟ 27:12; ອທ 5:2–4; ຄພ 5:15. ເບິ່ງ " ປະຈັກພະຍານຂອງພະຍານສາມຄົນ" ນຳອີກ ໃນພາກໜ້າຕົ້ນຂອງພຣະຄຳພີມໍມອນ.
*ຂ* ມມ 6:6; ຈສ—ປ 1:52. ຄມພ ແຜ່ນຈາລຶກ.
*ຄ* 1 ນຟ 4:8–9; 2 ນຟ 5:14; ຢຄ 1:10; ມຊຢ 1:16.
*ງ* ຄມພ ອູລີມ ແລະ ທຸມມີມ.
*ຈ* ອທ 3.
*ສ* ປຖກ 32:30; ອພຍ 33:11; ມຊ 1:2.
*ຊ* 1 ນຟ 16:10, 16, 26–29; ແອວ 37:38–47.
*ຍ* 1 ນຟ 2:5.
3 *ກ* ຄມພ ເປັນພະຍານ; ພະຍານ.
6 *ກ* ຄມພ ພຣະຄຳພີມໍມອນ.
*ຂ* 2 ນຟ 27:22; 3 ນຟ 26:7–10.

8 ແລະ ຖ້າຫາກພວກເຈົ້າເຮັດຕາມຄຳ
ບັນຊາສຸດທ້າຍ ເຫລົ່ານີ້ຂອງເຮົາ, ຊຶ່ງເຮົາ
ໄດ້ມອບ ໃຫ້ ແກ່ ພວກເຈົ້າ, ແລ້ວ [ກ]ປະຕູ
ນະລົກຈະ ເອົາ ຊະນະ ພວກ ເຈົ້າ ບໍ່ໄດ້;
ເພາະ [ຂ]ພຣະຄຸນຂອງເຮົາແມ່ນພຽງພໍສຳ
ລັບພວກເຈົ້າ, ແລະ ພວກເຈົ້າຈະຖືກ [ຄ]ຍົກ
ຂຶ້ນໃນວັນສຸດທ້າຍ.

9 ແລະ ເຮົາ, ພຣະເຢຊູຄຣິດ, [ກ]ພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ,
ໄດ້ກ່າວມັນໄວ້ດັ່ງນີ້ກັບພວກເຈົ້າ, ເພື່ອວ່າ
ເຮົາຈະໄດ້ນຳຈຸດປະສົງທີ່ຊອບທຳຂອງ
ເຮົາມາສູ່ລູກຫລານມະນຸດ. ອາແມນ.

## ພາກທີ 18

*ການເປີດເຜີຍຕໍ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ອໍລິເວີ ຄາວເດີຣີ, ແລະ ເດວິດ ວິດເມີ, ມອບໃຫ້ທີ່ ເມືອງເຟແອດ, ລັດນິວຢອກ, ເດືອນມິຖຸນາ 1829. ອີງຕາມສາດສະດາ, ການເປີດເຜີຍນີ້ ໄດ້ຖືກເຮັດໃຫ້ເປັນທີ່ຮູ້ຈັກກັນວ່າ "ການເອີ້ນຂອງອັກຄະສາວົກສິບສອງ ໃນຍຸກສຸດທ້າຍ, ແລະ ເປັນຄຳແນະນຳເລື່ອງການສ້າງສາສາດສະໜາຈັກຂຶ້ນນຳອີກ."*

*1–5, ຂໍ້ພຣະຄຳພີສະແດງໃຫ້ເຫັນວິທີທີ່ຈະສ້າງສາດສະໜາຈັກຂຶ້ນ; 6–8, ໂລກພວມສຸກງອມຢູ່ໃນຄວາມຊົ່ວຮ້າຍ; 9–16, ຄຸນຄ່າຂອງຈິດວິນຍານແມ່ນຍິ່ງໃຫຍ່; 17–25, ເພື່ອຈະໄດ້ຮັບຄວາມລອດ, ມະນຸດຕ້ອງຮັບພຣະນາມຂອງພຣະຄຣິດໄວ້ກັບຕົນ; 26–36, ການເອີ້ນ ແລະ ພາລະກິດຂອງອັກຄະສາວົກສິບສອງ ຖືກເປີດເຜີຍ; 37–39, ອໍລິເວີ ຄາວເດີຣີ ແລະ ເດວິດ ວິດເມີ ຕ້ອງຊອກຫາອັກຄະສາວົກສິບສອງ; 40–47, ເພື່ອຈະໄດ້ຮັບຄວາມລອດ, ມະນຸດຕ້ອງກັບໃຈ, ຮັບບັບຕິສະມາ, ແລະ ຮັກສາພຣະບັນຍັດ.*

1 ບັດນີ້, ຈົ່ງເບິ່ງ, ເນື່ອງຈາກສິ່ງຊຶ່ງເຈົ້າ,
ຜູ້ ຮັບ ໃຊ້ ຂອງ ເຮົາ ອໍ ລີ ເວີ ຄາວ ເດີຣີ, ມີ
ຄວາມ ປາດ ຖະ ໜາຢາກຈະຮູ້ຈາກເຮົາ,
ເຮົາຈຶ່ງຈະ ມອບ ຖ້ອຍຄຳ ເຫລົ່ານີ້ໃຫ້ແກ່
ເຈົ້າວ່າ:
2 ຈົ່ງ ເບິ່ງ, ເຮົາ ໄດ້ ສະແດງ ໃຫ້ ປະຈັກ
ແກ່ເຈົ້າ, ໂດຍພຣະວິນຍານຂອງ ເຮົາໃນ
ຫລາຍຄັ້ງ, ວ່າເລື່ອງທີ່ເຈົ້າໄດ້ຂຽນໄວ້ເປັນ
[ກ]ຄວາມຈິງ; ດັ່ງນັ້ນເຈົ້າ ຈຶ່ງຮູ້ວ່າ ມັນເປັນ
ຄວາມຈິງ.
3 ແລະ ຖ້າຫາກເຈົ້າຮູ້ວ່າມັນເປັນຄວາມ
ຈິງ, ຈົ່ງເບິ່ງ, ເຮົາມອບຄຳບັນຊາຂໍ້ໜຶ່ງໃຫ້
ແກ່ເຈົ້າ, ວ່າເຈົ້າ ຈະໄວ້ວາງໃຈເລື່ອງທີ່ຖືກ
[ກ]ຂຽນໄວ້;
4 ເພາະໃນນັ້ນ ທຸກເລື່ອງທີ່ຂຽນໄວ້ແມ່ນ
ກ່ຽວກັບຮາກຖານຂອງສາດສະໜາຈັກ
ຂອງເຮົາ, [ກ]ພຣະກິດຕິຄຸນຂອງເຮົາ, ແລະ
[ຂ]ດານຫີນຂອງເຮົາ.

---

8 ກ ມທ 16:18; 3 ນຟ 11:39; ຄພ 10:69.
ຂ ຄມພ ພຣະຄຸນ.
ຄ 1 ນຟ 13:37; 3 ນຟ 27:14–15, 22; ຄພ 9:14.
9 ກ ຄມພ ພຣະຜູ້ເປັນເຈົ້າ.
18 2 ກ ຄພ 6:15–17.
3 ກ ຄພ 98:11. ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
4 ກ ຄມພ ພຣະກິດຕິຄຸນ.
ຂ ຄມພ ຫີນ.

5 ດັ່ງນັ້ນ, ຖ້າຫາກເຈົ້າຈະສ້າງສາດສະໜາຈັກຂອງເຮົາຂຶ້ນ, ໄວ້ເທິງຮາກຖານຂອງພຣະກິດຕິຄຸນຂອງເຮົາ ແລະ ດານຫີນຂອງເຮົາ, ປະຕູນະລົກຈະເອົາຊະນະເຈົ້າບໍ່ໄດ້.

6 ຈົ່ງ ເບິ່ງ, [ກ]ໂລກ ພວມ ສຸກ ງອມ ຢູ່ ໃນຄວາມຊົ່ວຮ້າຍ; ແລະ ຈຶ່ງຈຳເປັນທີ່ຈະປຸກໃຫ້ລູກຫລານມະນຸດຕື່ນຂຶ້ນມາສູ່ການກັບໃຈ, ທັງ [ຂ]ຄົນຕ່າງຊາດ ແລະ ເຊື້ອສາຍອິດສະຣາເອນ.

7 ດັ່ງ ນັ້ນ, ໂດຍ ທີ່ ເຈົ້າ ໄດ້ ຮັບ [ກ]ບັບຕິສະມາ ໂດຍ ມືຂອງຜູ້ຮັບ ໃຊ້ ຂອງ ເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຕາມທີ່ເຮົາໄດ້ບັນຊາລາວ, ລາວຈຶ່ງໄດ້ສຳເລັດສິ່ງທີ່ເຮົາໄດ້ບັນຊາລາວ.

8 ແລະ ບັດນີ້, ຢ່າປະຫລາດໃຈເລີຍທີ່ເຮົາໄດ້ເອີ້ນລາວໃຫ້ມາສູ່ຈຸດປະສົງຂອງເຮົາເອງ, ຊຶ່ງຈຸດປະສົງນັ້ນ ແມ່ນເປັນທີ່ຮູ້ຈັກໃນເຮົາ; ດັ່ງນັ້ນ, ຖ້າຫາກລາວຈະ [ກ]ພາກພຽນໃນ [ຂ]ການຮັກສາບັນຍັດຂອງເຮົາ, ແລ້ວລາວຈະໄດ້ຮັບ [ຄ]ພອນໄປສູ່ຊີວິດນິລັນດອນ; ແລະ ຊື່ຂອງລາວຄື [ງ]ໂຈເຊັບ.

9 ແລະ ບັດນີ້, ອໍລິເວີ ຄາວເດີຣີ, ເຮົາກ່າວກັບເຈົ້າ, ແລະ ກັບເດວິດ ວິດເມີ ອີກ, ໂດຍທາງບັນຍັດ; ເພາະ, ຈົ່ງເບິ່ງ, ເຮົາບັນຊາມະນຸດທັງປວງໃນທຸກບ່ອນໃຫ້ກັບໃຈ, ແລະ ເຮົາກ່າວກັບພວກເຈົ້າ, ແມ່ນແຕ່ເຊັ່ນດຽວກັບໂປໂລ [ກ]ອັກຄະສາວົກຂອງເຮົາ, ເພາະພວກເຈົ້າໄດ້ຖືກເອີ້ນ ແມ່ນແຕ່ດ້ວຍການເອີ້ນອັນດຽວກັນກັບທີ່ລາວໄດ້ຖືກເອີ້ນ.

10 ຈົ່ງຈື່ຈຳໄວ້ວ່າ [ກ]ຄຸນຄ່າຂອງ [ຂ]ຈິດວິນຍານແມ່ນຍິ່ງໃຫຍ່ໃນສາຍພຣະເນດຂອງພຣະເຈົ້າ;

11 ເພາະ, ຈົ່ງ ເບິ່ງ, ພຣະ ຜູ້ ເປັນ ເຈົ້າ [ກ]ພຣະຜູ້ໄຖ່ຂອງເຈົ້າໄດ້ຮັບ [ຂ]ຄວາມຕາຍໃນເນື້ອໜັງ; ດັ່ງນັ້ນ ພຣະອົງຈຶ່ງໄດ້ [ຄ]ຮັບເອົາ [ງ]ຄວາມເຈັບປວດຂອງມະນຸດທັງປວງ, ເພື່ອວ່າມະນຸດທັງປວງຈະໄດ້ກັບໃຈ ແລະ ມາຫາພຣະອົງ.

12 ແລະ ພຣະ ອົງ ໄດ້ [ກ]ລຸກ ຂຶ້ນ ຈາກຄວາມຕາຍອີກ, ເພື່ອວ່າພຣະອົງຈະໄດ້ນຳມະນຸດທັງປວງມາຫາພຣະອົງ, ໂດຍເງື່ອນໄຂແຫ່ງ [ຂ]ການກັບໃຈ.

13 ແລະ [ກ]ຄວາມຊື່ນຊົມຂອງພຣະອົງນັ້ນຈະຍິ່ງໃຫຍ່ພຽງໃດນຳຈິດວິນຍານທີ່ກັບໃຈ!

14 ດັ່ງນັ້ນ, ພວກເຈົ້າຈຶ່ງຖືກ [ກ]ເອີ້ນໃຫ້ປ່າວປະກາດການກັບໃຈແກ່ຜູ້ຄົນພວກນີ້.

15 ແລະ ຖ້າ ຫາກ ພວກ ເຈົ້າຕ້ອງອອກແຮງຕະຫລອດວັນເວລາຂອງພວກເຈົ້າໃນການປ່າວປະກາດການກັບໃຈແກ່ຜູ້ຄົນພວກນີ້, ແລະ [ກ]ນຳຈິດວິນຍານດວງໜຶ່ງມາຫາເຮົາ, ຄວາມຊື່ນຊົມຂອງພວກເຈົ້າຈະຍິ່ງໃຫຍ່ພຽງໃດນຳເຂົາໃນອານາຈັກຂອງພຣະບິດາຂອງເຮົາ!

6 *ກ* ຄມພ ໂລກ.
*ຂ* ຄມພ ຄົນຕ່າງຊາດ.
7 *ກ* ຈສ—ປ 1:70–71.
8 *ກ* ຄມພ ພາກພຽນ, ຄວາມພາກພຽນ.
*ຂ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
*ຄ* ຄມພ ພອນ, ໃຫ້ພອນ, ເປັນພອນ.
*ງ* 2 ນຟ 3:14–15.
ຄມພ ສະມິດ, ໂຈເຊັບ, ຜູ້ລູກ.
9 *ກ* ຣມ 1:1.
10 *ກ* ຄມພ ຈິດວິນຍານ—ຄຸນຄ່າຂອງຈິດວິນຍານ.
*ຂ* ຄມພ ຈິດວິນຍານ.
11 *ກ* ຄມພ ພຣະຜູ້ໄຖ່.
*ຂ* ຄມພ ຄຶງ, ການຄຶງ.
*ຄ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ງ* ອຊຢ 53:4–5.
ຄມພ ຊົດໃຊ້, ການຊົດໃຊ້.
12 *ກ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຂ* ຄພ 19:4–18.
ຄມພ ກັບໃຈ, ການກັບໃຈ.
13 *ກ* ລກ 15:7.
14 *ກ* ແອວ 29:1–2; ຄພ 34:5–6; 63:57.
15 *ກ* ຄມພ ຈິດວິນຍານ—ຄຸນຄ່າຂອງຈິດວິນຍານ.

16 ແລະ ບັດນີ້, ຖ້າຫາກພວກເຈົ້າຈະ
ມີຄວາມຊື່ນຊົມຫລາຍພຽງນັ້ນນຳຈິດວິນ
ຍານດວງໜຶ່ງທີ່ພວກເຈົ້າໄດ້ນຳມາຫາເຮົາ
ໃນ [ກ]ອານາຈັກຂອງພຣະບິດາຂອງເຮົາ,
ແລ້ວພວກເຈົ້າຈະມີ [ຂ]ຄວາມຊື່ນຊົມຫລາຍ
ພຽງໃດຖ້າຫາກພວກເຈົ້າໄດ້ [ຄ]ນຳຈິດວິນ
ຍານຫລາຍດວງມາຫາເຮົາ!
17 ຈົ່ງເບິ່ງ, ພວກເຈົ້າມີພຣະກິດຕິຄຸນ
ຂອງເຮົາຢູ່ຕໍ່ໜ້າພວກເຈົ້າ, ແລະ ດານຫີນ
ຂອງເຮົາ, ແລະ [ກ]ຄວາມລອດຂອງເຮົາ.
18 ຈົ່ງ [ກ]ທູນຂໍພຣະບິດາໃນ [ຂ]ນາມຂອງ
ເຮົາ, ໃນສັດທາໂດຍເຊື່ອວ່າພວກເຈົ້າຈະ
ໄດ້ຮັບ, ແລະ ພວກເຈົ້າຈະມີພຣະວິນຍານ
ບໍລິສຸດສະຖິດຢູ່ນຳ, ຊຶ່ງສະແດງທຸກສິ່ງທີ່
[ຄ]ສົມຄວນໃຫ້ປະຈັກແກ່ລູກຫລານມະນຸດ.
19 ແລະ ຖ້າຫາກພວກເຈົ້າບໍ່ມີ [ກ]ສັດທາ,
[ຂ]ຄວາມຫວັງ, ແລະ [ຄ]ຄວາມໃຈບຸນ, ພວກ
ເຈົ້າຈະເຮັດຫຍັງບໍ່ໄດ້ເລີຍ.
20 ຢ່າ [ກ]ຂັດແຍ້ງກັບສາດສະໜາຈັກໃດ
ເລີຍ, ນອກຈາກ [ຂ]ສາດສະໜາຈັກຂອງ
ມານເທົ່ານັ້ນ.
21 ຈົ່ງ ຮັບ ເອົາ [ກ]ພຣະ ນາມ ຂອງ ພຣະ
ຄຣິດໄວ້ກັບພວກເຈົ້າ, ແລະ [ຂ]ກ່າວຄວາມ
ຈິງໃນ [ຄ]ຄວາມມີສະຕິສຳປະສັນຍະ.
22 ແລະ ເມື່ອຫລາຍຕໍ່ຫລາຍຄົນໄດ້ກັບ
ໃຈ ແລະ ຮັບ [ກ]ບັບຕິສະມາໃນນາມຂອງ
ເຮົາ, ຊຶ່ງຄື ພຣະເຢຊູຄຣິດ, ແລະ [ຂ]ອົດທົນ
ຈົນເຖິງທີ່ສຸດ, ເຂົາເຫລົ່ານັ້ນຈະລອດ.
23 ຈົ່ງເບິ່ງ, ພຣະເຢຊູຄຣິດຄື [ກ]ພຣະ
ນາມຊຶ່ງພຣະບິດາປະທານໃຫ້, ແລະ ບໍ່ມີ
ພຣະນາມອື່ນອີກທີ່ປະທານໃຫ້ ຊຶ່ງໂດຍ
ພຣະນາມນັ້ນມະນຸດຈະລອດໄດ້;
24 ດັ່ງນັ້ນ, ມະນຸດທັງປວງຈະຕ້ອງຮັບ
ພຣະນາມໄວ້ກັບຕົນ ຊຶ່ງພຣະບິດາປະທານ
ໃຫ້, ເພາະໃນວັນສຸດທ້າຍເຂົາຈະຖືກເອີ້ນ
ຕາມພຣະນາມນັ້ນ;
25 ດັ່ງນັ້ນ, ຖ້າຫາກເຂົາບໍ່ຮູ້ [ກ]ພຣະນາມ
ຊຶ່ງໂດຍພຣະນາມນັ້ນ ເຂົາຖືກເອີ້ນຕາມ,
ເຂົາຈະບໍ່ມີບ່ອນຢູ່ໃນ [ຂ]ອານາຈັກຂອງ
ພຣະບິດາຂອງເຮົາ.
26 ແລະ ບັດນີ້, ຈົ່ງເບິ່ງ, ມີຄົນອື່ນອີກ
ທີ່ຖືກເອີ້ນໃຫ້ປະກາດພຣະກິດຕິຄຸນຂອງ
ເຮົາ, ທັງໃຫ້ແກ່ [ກ]ຄົນຕ່າງຊາດ ແລະ ຊາວ
ຢິວ;
27 ແທ້ ຈິງ ແລ້ວ, ແມ່ນ ແຕ່ [ກ]ສິບ ສອງ
ຄົນ; ແລະ ອັກຄະສາວົກສິບສອງຈະເປັນ
ສານຸສິດຂອງເຮົາ, ແລະ ພວກເຂົາຈະຮັບ
ເອົານາມຂອງເຮົາໄວ້; ແລະ ອັກຄະສາວົກ
ສິບສອງຄືຜູ້ທີ່ຈະມີຄວາມປາດຖະໜາທີ່
ຈະຮັບເອົາ [ຂ]ນາມຂອງເຮົາດ້ວຍຄວາມມຸ້ງ
ໝາຍເຕັມທີ່ແຫ່ງໃຈ.
28 ແລະ ຖ້າຫາກພວກເຂົາມີຄວາມປາດ

16 ກ ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
ຂ ແອວ 26:11. ຄມພ ຊື່ນຊົມ, ຄວາມຊື່ນຊົມ.
ຄ ຄມພ ວຽກງານເຜີຍແຜ່.
17 ກ ຄມພ ລອດ, ຄວາມລອດ.
18 ກ ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
ຂ ຢຮ 15:16.
ຄ ຄພ 88:63–65.
19 ກ ຄມພ ສັດທາ.
ຂ ຄມພ ຫວັງ, ຄວາມຫວັງ.
ຄ ຄມພ ໃຈບຸນ, ຄວາມໃຈບຸນ.
20 ກ 2 ຕມຫ 2:23–24; 3 ນຟ 11:29–30.
ຂ ຄມພ ມານ—ສາດສະໜາຈັກຂອງມານ.
21 ກ 2 ນຟ 31:13; ມຊຢ 5:8; 3 ນຟ 27:5; ຄພ 20:37.
ຂ ຄພ 100:5–8.
ຄ ຣມ 12:3.
22 ກ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
ຂ ຄມພ ອົດທົນ, ຄວາມອົດທົນ.
23 ກ ມລກ 1:11; ກຈກ 4:12; ມຊຢ 3:17; ຣລມ 3:28–29.
25 ກ ມຊຢ 5:9–14.
ຂ ຄມພ ລັດສະໝີພາບຂອງຊັ້ນສູງ.
26 ກ ຄພ 90:8–9; 112:4.
27 ກ ຄມພ ອັກຄະສາວົກ.
ຂ ຄພ 27:12.

ຖະໜາທີ່ຈະຮັບເອົານາມຂອງເຮົາດ້ວຍ
ຄວາມມຸ້ງໝາຍເຕັມທີ່ແຫ່ງໃຈ, ແລ້ວພວກ
ເຂົາຈະຖືກເອີ້ນໃຫ້ໄປທົ່ວ [ກ]ໂລກເພື່ອສັ່ງ
ສອນ [ຂ]ພຣະກິດຕິຄຸນຂອງເຮົາແກ່ [ຄ]ມະນຸດ
ສະໂລກທັງໝົດ.
29 ແລະ ພວກເຂົາເປັນຜູ້ໄດ້ຮັບການ
ແຕ່ງຕັ້ງຈາກເຮົາ ເພື່ອໃຫ້ [ກ]ບັບຕິສະມາໃນ
ນາມຂອງເຮົາ, ຕາມສິ່ງຊຶ່ງຖືກຂຽນໄວ້;
30 ແລະ ພວກເຈົ້າມີສິ່ງຊຶ່ງຖືກຂຽນໄວ້ຢູ່
ຕໍ່ໜ້າພວກເຈົ້າ; ດັ່ງນັ້ນ, ພວກເຈົ້າຕ້ອງປະ
ຕິບັດຕາມຖ້ອຍຄຳຊຶ່ງຖືກຂຽນໄວ້.
31 ແລະ ບັດນີ້ ເຮົາກ່າວກັບພວກເຈົ້າ,
ອັກຄະສາວົກ [ກ]ສິບສອງ—ຈົ່ງເບິ່ງ, ພຣະ
ຄຸນຂອງເຮົາແມ່ນພຽງພໍສຳລັບພວກເຈົ້າ;
ພວກເຈົ້າຕ້ອງເດີນໄປຢ່າງພາກພູມໃຈຕໍ່
ໜ້າເຮົາ ແລະ ບໍ່ເຮັດບາບ.
32 ແລະ, ຈົ່ງເບິ່ງ, ພວກເຈົ້າເປັນຜູ້ທີ່
ໄດ້ຮັບ [ກ]ການແຕ່ງຕັ້ງຈາກເຮົາ ເພື່ອແຕ່ງ
ຕັ້ງປະໂລຫິດ ແລະ ຄູສອນ; ເພື່ອປະກາດ
ພຣະກິດຕິຄຸນຂອງເຮົາ, [ຂ]ຕາມອຳນາດ
ຂອງພຣະວິນຍານບໍລິສຸດຊຶ່ງຢູ່ໃນພວກ
ເຈົ້າ, ແລະ ຕາມ [ຄ]ການເອີ້ນ ແລະ ຂອງ
ປະທານຂອງພຣະເຈົ້າໃຫ້ແກ່ມະນຸດ;
33 ແລະ ເຮົາພຣະເຢຊູຄຣິດ, ພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ,
ໄດ້ກ່າວມັນໄວ້ດັ່ງນີ້.
34 [ກ]ຖ້ອຍຄຳເຫລົ່ານີ້ບໍ່ໄດ້ເປັນຂອງ
ມະນຸດ ຫລື ຂອງຄົນໃດ, ແຕ່ເປັນຂອງເຮົາ;
ດັ່ງນັ້ນ, ເຈົ້າຈົ່ງເປັນພະຍານວ່າ ມັນເປັນ
ຂອງເຮົາ ແລະ ບໍ່ແມ່ນເປັນຂອງຄົນໃດ;
35 ເພາະແມ່ນ [ກ]ສຽງຂອງເຮົາ ຊຶ່ງກ່າວ
ກັບພວກເຈົ້າ; ເພາະມັນຖືກມອບໃຫ້ແກ່
ພວກເຈົ້າໂດຍວິນຍານຂອງເຮົາ, ແລະ
ໂດຍອຳນາດຂອງເຮົາ ພວກເຈົ້າສາມາດ
ອ່ານມັນໃຫ້ກັນຟັງໄດ້; ແລະ ຍົກເວັ້ນແຕ່
ເປັນໂດຍອຳນາດຂອງເຮົາເທົ່ານັ້ນ ພວກ
ເຈົ້າຈຶ່ງບໍ່ສາມາດມີມັນໄດ້;
36 ດັ່ງນັ້ນ, ພວກເຈົ້າສາມາດ [ກ]ເປັນ
ພະຍານໄດ້ວ່າ ພວກເຈົ້າໄດ້ຍິນສຽງຂອງ
ເຮົາ, ແລະ ຮູ້ຖ້ອຍຄຳຂອງເຮົາ.
37 ແລະ ບັດນີ້, ຈົ່ງເບິ່ງ, ເຮົາມອບໃຫ້ແກ່
ພວກເຈົ້າ, ອໍລີເວີ ຄາວເດີຣີ, ແລະ ເດວິດ
ວິດເມີ ນຳອີກ, ເພື່ອວ່າພວກເຈົ້າຈະຊອກ
ຫາອັກຄະສາວົກສິບສອງ, ຜູ້ຈະມີຄວາມ
ປາດຖະໜາສິ່ງຊຶ່ງເຮົາໄດ້ກ່າວມານັ້ນ;
38 ແລະ ໂດຍຄວາມປາດຖະໜາຂອງ
ພວກເຂົາ ແລະ [ກ]ວຽກງານຂອງພວກເຂົາ
ພວກເຈົ້າຈະຮູ້ພວກເຂົາ.
39 ແລະ ເມື່ອພວກເຈົ້າພົບເຫັນພວກ
ເຂົາແລ້ວ ພວກເຈົ້າຈະສະແດງສິ່ງເຫລົ່ານີ້
ໃຫ້ພວກເຂົາເຫັນ.
40 ແລະ ພວກເຈົ້າຈະກົ້ມຂາບລົງ ແລະ
[ກ]ນະມັດສະການພຣະບິດາໃນນາມຂອງ
ເຮົາ.
41 ແລະ ພວກເຈົ້າຕ້ອງສັ່ງສອນໂລກ,
ໂດຍກ່າວວ່າ: ທ່ານຕ້ອງກັບໃຈ ແລະ ຮັບ
ບັບຕິສະມາ, ໃນພຣະນາມຂອງພຣະເຢຊູ
ຄຣິດ;
42 ເພາະມະນຸດທັງປວງຈະຕ້ອງກັບໃຈ
ແລະ ຮັບບັບຕິສະມາ, ແລະ ບໍ່ພຽງແຕ່ຜູ້

28 *ກ* ມຣກ 16:15–16.
*ຂ* ຄມພ ພຣະກິດຕິຄຸນ.
*ຄ* ຄພ 1:2; 42:58.
29 *ກ* 3 ນຟ 11:21–28; ຄພ 20:72–74.
31 *ກ* ຄພ 107:23–35.
32 *ກ* ມຣນ 3; ຄພ 20:60; 107:58. ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* 2 ປຕ 1:21; ຄພ 68:3–4.
*ຄ* ຄພ 20:27.
34 *ກ* ຄມພ ພຣະຄຳພີ.
35 *ກ* ຄພ 1:38. ຄມພ ສຽງ.
36 *ກ* ຄມພ ເປັນພະຍານ.
38 *ກ* ຄມພ ວຽກງານ.
40 *ກ* ຄມພ ນະມັດສະການ.

ຊາຍເທົ່ານັ້ນ, ແຕ່ຜູ້ຍິງ, ແລະ ເດັກນ້ອຍນຳ
ອີກ ຜູ້ຈະ ເຖິງອາຍຸທີ່ [ກ]ຮູ້ຈັກຮັບ ຜິດຊອບ
ໄດ້.
43 ແລະ ບັດ ນີ້, ຫລັງ ຈາກ ທີ່ ພວກ ເຈົ້າ
ໄດ້ຮັບສິ່ງນີ້ແລ້ວ, ພວກເຈົ້າຈະຕ້ອງຮັກສາ
[ກ]ບັນຍັດຂອງເຮົາໃນທຸກສິ່ງ;
44 ແລະ ຜ່ານພວກເຈົ້າ ເຮົາຈະກະທຳ
[ກ]ວຽກງານອັນໜ້າອັດສະຈັນໃຈໃນທ່າມ
ກາງລູກຫລານມະນຸດ, ຈົນເຮັດໃຫ້ຫລາຍ
ຄົນ [ຂ]ສຳນຶກເຖິງບາບຂອງພວກເຂົາ, ເພື່ອ
ວ່າພວກເຂົາຈະໄດ້ມາສູ່ການກັບໃຈ, ແລະ
ເພື່ອວ່າ ພວກເຂົາຈະມາຫາອານາຈັກຂອງ
ພຣະບິດາຂອງເຮົາ.
45 ດັ່ງ ນັ້ນ, ພອນ ຊຶ່ງ ເຮົາ ມອບ ໃຫ້ ແກ່
ພວກ ເຈົ້າ ແມ່ນ ຍິ່ງ ໃຫຍ່ [ກ]ກວ່າທຸກສິ່ງທັງ
ໝົດ.
46 ແລະ ຫລັງ ຈາກ ທີ່ ພວກ ເຈົ້າ ໄດ້ ຮັບ
ສິ່ງນີ້, ຖ້າຫາກພວກເຈົ້າບໍ່ [ກ]ຮັກສາບັນຍັດ
ຂອງເຮົາ ພວກເຈົ້າຈະລອດບໍ່ໄດ້ໃນອານາ
ຈັກຂອງພຣະບິດາຂອງເຮົາ.
47 ຈົ່ງເບິ່ງ, ເຮົາພຣະເຢຊູຄຣິດ, ພຣະ
ຜູ້ ເປັນ ເຈົ້າອົງ ເປັນ ພຣະ ເຈົ້າຂອງພວກ
ເຈົ້າ, ແລະ ພຣະຜູ້ໄຖ່ຂອງພວກເຈົ້າ, ໂດຍ
ອຳນາດຂອງວິນຍານຂອງເຮົາ ໄດ້ກ່າວມັນ
ໄວ້ດັ່ງນີ້. ອາແມນ.

---

# ພາກທີ 19

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ, ທີ່ເມືອງແມນເຈດສະເຕີ, ລັດນິວຢອກ, ອາດເປັນໃນລະດູແລ້ງຂອງປີ 1829. ໃນປະຫວັດຂອງເພິ່ນ, ສາດສະດາສະເໜີມັນວ່າ ເປັນ "ພຣະບັນຍັດຈາກພຣະເຈົ້າ ແລະ ບໍ່ແມ່ນຈາກມະນຸດ, ແກ່ມາຕິນ ແຮຣິສ, ມອບໃຫ້ ໂດຍພຣະອົງຜູ້ຊົງນິລັນດອນ."*

*1–3, ພຣະຄຣິດມີອຳນາດທັງໝົດ; 4–5, ມະນຸດທັງປວງຈະຕ້ອງກັບໃຈ ຖ້າບໍ່ດັ່ງນັ້ນຈະຕ້ອງທຸກທໍລະມານ; 6–12, ການລົງໂທດນິລັນດອນຄືການລົງໂທດຂອງພຣະເຈົ້າ; 13–20, ພຣະຄຣິດໄດ້ທົນທຸກທໍລະມານເພື່ອທຸກຄົນ, ເພື່ອວ່າພວກເຂົາຈະບໍ່ໄດ້ທົນທຸກທໍລະມານຖ້າຫາກພວກເຂົາກັບໃຈ; 21–28, ຈົ່ງສັ່ງສອນພຣະກິດຕິຄຸນແຫ່ງການກັບໃຈ; 29–41, ຈົ່ງປະກາດຂ່າວອັນໜ້າຊື່ນຊົມ.*

1 ເຮົາ ຄື [ກ]ອາລະຟາ ແລະ ໂອເມຄາ,
[ຂ]ພຣະຄຣິດອົງເປັນພຣະຜູ້ເປັນເຈົ້າ; ແທ້
ຈິງແລ້ວ, ເຮົານີ້ແຫລະຄືຜູ້ນັ້ນ, ເປັນຕົ້ນ
ແລະ ທີ່ສຸດ, ເປັນພຣະຜູ້ໄຖ່ຂອງໂລກ.
2 ເຮົາ, ຫລັງຈາກໄດ້ບັນລຸ ແລະ [ກ]ສຳ
ເລັດຕາມພຣະປະສົງຂອງພຣະອົງຜູ້ຊຶ່ງ
ເຮົາຂຶ້ນຢູ່ກັບ ແມ່ນແຕ່ພຣະບິດາ, ກ່ຽວ

---

42 ກ ຄພ 20:71; 29:47; 68:27. ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
43 ກ ຄມພ ພຣະບັນຍັດຂອງພຣະເຈົ້າ.
44 ກ ອຊຢ 29:14; ຄພ 4:1.
ຂ ແອວ 36:12–19; 62:45.
45 ກ ຄພ 84:35–38.
46 ກ ຄພ 82:3.
**19** 1 ກ ພນມ 1:8, 11; 3 ນຟ 9:18; ຄພ 35:1; 61:1. ຄມພ ອາລະຟາ ແລະ ໂອເມຄາ.
ຂ ຄມພ ພຣະເຢຊູຄຣິດ.
2 ກ ຢຮ 17:4; 3 ນຟ 11:11.

ກັບ ເຮົາ—ໂດຍທີ່ສຳເລັດສິ່ງນີ້ ເພື່ອວ່າ
ເຮົາ ຈະ ໄດ້ [ຂ]ເຮັດໃຫ້ທຸກສິ່ງຂຶ້ນຢູ່ກັບ
ເຮົາ—
3 ໂດຍ ມີ [ກ]ອຳນາດ ທັງ ໝົດ, ແມ່ນ ຈົນ
ເຖິງ [ຂ]ການທຳລາຍຊາຕານ ແລະ ວຽກງານ
ຂອງມັນໃນຄາວ [ຄ]ສິ້ນສຸດໂລກ, ແລະ ວັນ
ອັນຍິ່ງໃຫຍ່ແຫ່ງການພິພາກສາ, ຊຶ່ງເຮົາ
ຈະເຮັດໃຫ້ເກີດຂຶ້ນກັບຜູ້ອາໄສຢູ່ໃນນັ້ນ,
ໂດຍ [ງ]ການພິພາກສາມະນຸດທຸກໆຄົນຕາມ
[ຈ]ວຽກງານ ແລະ ການກະທຳຂອງເຂົາ ຊຶ່ງ
ເຂົາໄດ້ເຮັດໄປ.
4 ແລະ ແນ່ນອນວ່າມະນຸດທຸກໆຄົນຈະ
ຕ້ອງ [ກ]ກັບໃຈ ຖ້າບໍ່ດັ່ງນັ້ນຈະ [ຂ]ທຸກທໍລະ
ມານ, ເພາະເຮົາ, ພຣະເຈົ້າ, [ຄ]ບໍ່ມີທີ່ສຸດ.
5 ດັ່ງນັ້ນ, ເຮົາຈະບໍ່ [ກ]ຍົກເລີກການພິ
ພາກສາ ຊຶ່ງເຮົາຈະເຮັດໃຫ້ເກີດຂຶ້ນ, ແຕ່
ວິບັດຈະອອກໄປ, ແທ້ຈິງແລ້ວ, [ຂ]ການຮ້ອງ
ໄຫ້, ການຄວນຄາງ ແລະ ການຂົບແຂ້ວ
ຄຽ້ວຟັນ ຈະເກີດກັບຄົນທີ່ຖືກພົບວ່າຢູ່ທາງ
ເບື້ອງ [ຄ]ຊ້າຍມືຂອງເຮົາ.
6 ເຖິງຢ່າງໃດກໍຕາມ, [ກ]ບໍ່ມີຂຽນໄວ້ວ່າ
ຄວາມທຸກທໍລະມານນີ້ຈະບໍ່ມີທີ່ສຸດຈັກ
ເທື່ອ, ແຕ່ມີຂຽນໄວ້ວ່າ ເປັນຄວາມ*ທໍລະ
ມານທີ່* [ຂ]*ບໍ່ມີວັນສິ້ນສຸດ.*
7 ອີກ ເທື່ອ ໜຶ່ງ, ມີ ຂຽນ ໄວ້ ວ່າ ເປັນ
[ກ]*ຄວາມອັບປະໂຫຍດນິລັນດອນ;* ດັ່ງນັ້ນ
ມັນຈຶ່ງແຈ່ມແຈ້ງຫລາຍກວ່າຂໍ້ພຣະຄຳພີ
ອື່ນໆ, ເພື່ອວ່າມັນຈະກະທົບກະເທືອນໃຈ
ຂອງລູກຫລານມະນຸດ, ທັງໝົດນີ້ກໍເພື່ອ
ລັດສະໝີພາບແຫ່ງນາມຂອງເຮົາ.
8 ດັ່ງນັ້ນ, ເຮົາຈະອະທິບາຍຄວາມລຶກ
ລັບນີ້ແກ່ເຈົ້າ, ເພາະມັນສົມຄວນທີ່ເຈົ້າຈະ
ຮູ້ ເຊັ່ນດຽວກັບອັກຄະສາວົກຂອງເຮົາ.
9 ເຮົາກ່າວກັບເຈົ້າທີ່ຖືກເລືອກໃນການ
ນີ້, ແມ່ນແຕ່ກັບວ່າເປັນຄົນໜຶ່ງ, ເພື່ອເຈົ້າ
ຈະໄດ້ເຂົ້າໄປໃນ [ກ]ທີ່ພັກຂອງເຮົາ.
10 ເພາະ, ຈົ່ງ ເບິ່ງ, [ກ]ຄວາມ ລຶກ ລັບ
ຂອງຄວາມເປັນເໝືອນພຣະເຈົ້າຊ່າງຍິ່ງ
ໃຫຍ່ພຽງໃດ! ເພາະ, ຈົ່ງເບິ່ງ, ເຮົາບໍ່ມີທີ່
ສຸດ, ແລະ ການລົງໂທດ ຊຶ່ງເຮົາມອບໃຫ້
ຈາກມືຂອງເຮົາແມ່ນການລົງໂທດທີ່ບໍ່ມີທີ່
ສຸດ, ເພາະ [ຂ]ບໍ່ມີທີ່ສຸດຄືນາມຂອງເຮົາ. ດັ່ງ
ນັ້ນ—
11 ການລົງໂທດ [ກ]ນິລັນດອນຄືການລົງ
ໂທດຂອງພຣະເຈົ້າ.
12 ການລົງໂທດທີ່ບໍ່ມີທີ່ສຸດຄືການລົງ
ໂທດຂອງພຣະເຈົ້າ.
13 ດັ່ງນັ້ນ, ເຮົາຈຶ່ງບັນຊາເຈົ້າໃຫ້ກັບໃຈ,
ແລະ ຮັກສາ [ກ]ບັນຍັດ ຊຶ່ງເຈົ້າໄດ້ຮັບໂດຍ
ມືຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ,
ຜູ້ລູກ, ໃນນາມຂອງເຮົາ;
14 ແລະ ເປັນໂດຍອຳນາດທີ່ຊົງລິດຍິ່ງ
ໃຫຍ່ຂອງເຮົາທີ່ເຈົ້າໄດ້ຮັບມັນ;
15 ສະນັ້ນ ເຮົາ ຈຶ່ງບັນຊາເຈົ້າໃຫ້ກັບ
ໃຈ—ກັບໃຈເຖີດ, ຖ້າບໍ່ດັ່ງນັ້ນເຮົາຈະຕີ
ສອນເຈົ້າດ້ວຍແສ້ຈາກປາກຂອງເຮົາ,

2 *ຂ* ຟລປ 3:21.
3 *ກ* ຄມພ ອຳນາດ.
*ຂ* ອຊຢ 14:12–17; 1 ຢຮ 3:8; 1 ນຟ 22:26; ຄພ 88:111–115.
*ຄ* ຄມພ ໂລກ—ທີ່ສຸດຂອງໂລກ.
*ງ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຈ* ຄມພ ວຽກງານ.
4 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ລກ 13:3; ຣລມ 14:19.
*ຄ* ມຊ 1:3.
5 *ກ* ຄພ 56:4; 58:32.
*ຂ* ມທ 13:42.
*ຄ* ມທ 25:41–43.
6 *ກ* ຄພ 76:105–106; 138:59.
*ຂ* ຄພ 76:33, 44–45.
7 *ກ* ຣລມ 12:25–26; ຄພ 29:44.
9 *ກ* ຄມພ ພັກຜ່ອນ.
10 *ກ* ຢຄ 4:8; ຄພ 76:114–116.
*ຂ* ມຊ 1:3; 7:35. ຄມພ ບໍ່ມີທີ່ສຸດ.
11 *ກ* ມທ 25:46.
13 *ກ* ຄພ 5:2; 10:6–7; 17.

ແລະ ໂດຍ ພຣະພິໂລດຂອງເຮົາ, ແລະ
ໂດຍຄວາມໂມໂຫຂອງເຮົາ, ແລ້ວ [ກ]ຄວາມ
ທຸກທໍລະມານຂອງເຈົ້າຈະສາຫັດ—ສາຫັດ
ພຽງໃດເຈົ້າບໍ່ຮູ້, ໃຫຍ່ຫລວງພຽງໃດເຈົ້າບໍ່
ຮູ້, ແທ້ຈິງແລ້ວ, ຍາກແສນຈະທົນພຽງໃດ
ເຈົ້າບໍ່ຮູ້.
16 ເພາະຈົ່ງເບິ່ງ, ເຮົາພຣະເຈົ້າ, ໄດ້ທົນ
[ກ]ທຸກທໍລະມານກັບສິ່ງເຫລົ່ານີ້ແທນທຸກ
ຄົນ, ເພື່ອວ່າພວກເຂົາ [ຂ]ຈະບໍ່ໄດ້ທົນທຸກທໍ
ລະມານຖ້າຫາກພວກເຂົາຈະ [ຄ]ກັບໃຈ;
17 ແຕ່ຖ້າຫາກພວກເຂົາບໍ່ກັບໃຈ ພວກ
ເຂົາຈະຕ້ອງທົນ [ກ]ທຸກທໍລະມານແມ່ນແຕ່
ເໝືອນດັ່ງເຮົາ;
18 ຊຶ່ງຄວາມທຸກທໍລະມານເຮັດໃຫ້ຕົວ
ເຮົາເອງ, ແມ່ນແຕ່ພຣະເຈົ້າ, ຜູ້ຍິ່ງໃຫຍ່
ທີ່ສຸດໃນບັນດາທຸກສິ່ງທັງປວງ, ຕ້ອງສັ່ນ
ເພາະຄວາມເຈັບປວດ, ແລະ ເລືອດໄຫລ
ອອກຈາກທຸກຂຸມຂົນ, ແລະ ທົນທຸກທໍລະ
ມານທັງຮ່າງກາຍ ແລະ ວິນຍານ—ແລະ
ປາດຖະໜາທີ່ເຮົາຈະ [ກ]ບໍ່ຕ້ອງດື່ມຈອກອັນ
ຂົມຂື່ນນັ້ນ, ແລະ ຢຸດສະຫງັກຢູ່—
19 ເຖິງຢ່າງໃດກໍຕາມ, ລັດສະໝີພາບ
ຈົ່ງມີແດ່ພຣະບິດາ, ແລະ ເຮົາໄດ້ຮັບເອົາ
ແລະ ໄດ້ [ກ]ສຳເລັດການຕຽມຂອງເຮົາເພື່ອ
ລູກຫລານມະນຸດ.
20 ດັ່ງນັ້ນ, ເຮົາຈຶ່ງບັນຊາເຈົ້າອີກໃຫ້ກັບ
ໃຈ, ຖ້າບໍ່ດັ່ງນັ້ນເຮົາຈະເຮັດໃຫ້ເຈົ້າຖ່ອມ
ຕົວລົງດ້ວຍອຳນາດທີ່ຊົງລິດຍິ່ງໃຫຍ່ຂອງ
ເຮົາ; ແລະ ວ່າເຈົ້າຈະ [ກ]ສາລະພາບບາບ
ຂອງເຈົ້າ, ຖ້າບໍ່ດັ່ງນັ້ນເຈົ້າຈະໄດ້ທົນກັບ
ການລົງໂທດເຫລົ່ານີ້ທີ່ເຮົາໄດ້ກ່າວມາ, ຊຶ່ງ
ໃນລະດັບນ້ອຍທີ່ສຸດ, ແທ້ຈິງແລ້ວ, ແມ່ນ
ແຕ່ໃນລະດັບຕ່ຳທີ່ສຸດ ເຈົ້າກໍໄດ້ຊີມມາ
ແລ້ວໃນເວລາທີ່ເຮົາຖອນວິນຍານຂອງ
ເຮົາອອກໄປ.
21 ແລະ ເຮົາບັນຊາເຈົ້າວ່າ ເຈົ້າຈະບໍ່
[ກ]ສັ່ງສອນສິ່ງໃດນອກຈາກການກັບໃຈ,
ແລະ [ຂ]ບໍ່ສະແດງເລື່ອງເຫລົ່ານີ້ໃຫ້ໂລກ
ເຫັນຈົນກວ່າເຮົາເຫັນວ່າມັນເປັນຄວາມ
ສະຫລຽວສະຫລາດ ທີ່ຈະເຮັດ.
22 ເພາະພວກເຂົາຍັງ [ກ]ກິນຊີ້ນບໍ່ໄດ້
ເທື່ອຕອນນີ້, ພຽງແຕ່ກິນ [ຂ]ນົມໄດ້ເທົ່ານັ້ນ;
ດັ່ງນັ້ນ, ພວກເຂົາຈຶ່ງບໍ່ຄວນຮູ້ເລື່ອງເຫລົ່າ
ນີ້, ຖ້າບໍ່ດັ່ງນັ້ນພວກເຂົາຈະຖືກທຳລາຍ.
23 ຈົ່ງຮຽນຮູ້ຈາກເຮົາ, ແລະ ຟັງຖ້ອຍຄຳ
ຂອງເຮົາ; ຈົ່ງ [ກ]ເດີນໄປໃນ [ຂ]ຄວາມອ່ອນ
ໂຍນແຫ່ງພຣະວິນຍານຂອງເຮົາ, ແລະ
ເຈົ້າຈະມີ [ຄ]ສັນຕິສຸກໃນເຮົາ.
24 ເຮົາຄື [ກ]ພຣະເຢຊູຄຣິດ; ເຮົາໄດ້ມາ
ຕາມພຣະປະສົງຂອງພຣະບິດາ, ແລະ ເຮົາ
ເຮັດຕາມພຣະປະສົງຂອງພຣະອົງ.
25 ແລະ ອີກເທື່ອໜຶ່ງ, ເຮົາບັນຊາເຈົ້າ
ວ່າ ເຈົ້າຈະບໍ່ [ກ]ໂລບເອົາ [ຂ]ເມຍຂອງເພື່ອນ
ບ້ານຂອງເຈົ້າ; ຫລື ສະແຫວງຫາທີ່ຈະເອົາ
ຊີວິດຂອງເພື່ອນບ້ານຂອງເຈົ້າ.
26 ແລະ ອີກເທື່ອໜຶ່ງ, ເຮົາບັນຊາເຈົ້າວ່າ

15 ກ ແອວ 36:11–19.
16 ກ ແອວ 11:40–41.
ຄມພ ຊົດໃຊ້, ການຊົດໃຊ້.
ຂ ຄມພ ເມດຕາ, ມີເມດ
ຕາ, ຄວາມເມດຕາ.
ຄ ຄມພ ປົດບາບ,
ການປົດບາບ.
17 ກ ຄພ 29:17.
18 ກ ລກ 22:42–44.
19 ກ ຢຮ 17:4; 19:30.
20 ກ ຈບຊ 5:6–7;
ມຊຢ 26:29;
ຄພ 58:43; 64:7.
ຄມພ ສາລະພາບ,
ການສາລະພາບ.
21 ກ ຄພ 11:9.
ຂ ຈສ—ປ 1:42.
22 ກ ຄພ 78:17–18.
ຂ ຮຣ 5:11–14;
ຄພ 50:40.
23 ກ ມຣນ 7:3–4.
ຂ ຄມພ ອ່ອນໂຍນ,
ຄວາມອ່ອນໂຍນ.
ຄ ຄມພ ສະຫງົບ,
ຄວາມສະຫງົບ.
24 ກ ຄມພ ພຣະເຢຊູຄຣິດ.
25 ກ ຄມພ ໂລບ, ຄວາມໂລບ.
ຂ ອພຍ 20:17;
1 ກຣທ 7:2–4.
ຄມພ ຫລິ້ນຊູ້.

ເຈົ້າຈະບໍ່ໂລບຊັບສົມບັດຂອງເຈົ້າເອງ, ແຕ່
ໃຫ້ແບ່ງມັນໄປດ້ວຍຄວາມເຕັມໃຈໃນການ
ພິມພຣະຄຳພີມໍມອນ, ຊຶ່ງບັນຈຸ [ກ]ຄວາມຈິງ
ແລະ ພຣະຄຳຂອງພຣະເຈົ້າ—
27 ຊຶ່ງເປັນຖ້ອຍຄຳຂອງເຮົາເຖິງ [ກ]ຄົນ
ຕ່າງຊາດ, ເພື່ອບໍ່ດົນມັນຈະໄປເຖິງ [ຂ]ຊາວ
ຢິວ, ຊຶ່ງຊາວເລມັນເປັນ [ຄ]ຜູ້ທີ່ເຫລືອຢູ່ຂອງ
ພວກເຂົາ, ເພື່ອພວກເຂົາຈະເຊື່ອພຣະກິດ
ຕິຄຸນ, ແລະ ບໍ່ເຝົ້າຄອຍຖ້າການສະເດັດ
ມາຂອງ [ງ]ພຣະເມຊີອາ ຜູ້ຊຶ່ງໄດ້ສະເດັດມາ
ແລ້ວ.
28 ແລະ ອີກເທື່ອໜຶ່ງ, ເຮົາບັນຊາເຈົ້າ
ວ່າ ຈົ່ງ [ກ]ອະທິຖານ [ຂ]ອອກສຽງ ແລະ ຢູ່ໃນ
ໃຈຂອງເຈົ້ານຳອີກ; ແທ້ຈິງແລ້ວ, ຢູ່ຕໍ່ໜ້າ
ໂລກ ແລະ ໃນບ່ອນລີ້ລັບນຳອີກ, ໃນສາ
ທາລະນະ ແລະ ໃນບ່ອນລັບລີ້ນຳອີກ.
29 ແລະ ເຈົ້າຈົ່ງ [ກ]ປະກາດຂ່າວອັນໜ້າ
ຊື່ນຊົມ, ແທ້ຈິງແລ້ວ, ເຈົ້າຈົ່ງປະກາດມັນຢູ່
ເທິງພູ, ແລະ ຢູ່ສະຖານທີ່ສູງທຸກແຫ່ງຫົນ,
ແລະ ໃນບັນດາຜູ້ຄົນທັງປວງ ໃນບ່ອນທີ່
ເຈົ້າໄດ້ຮັບອະນຸຍາດໃຫ້ເຮັດ.
30 ແລະ ເຈົ້າຈົ່ງເຮັດສິ່ງນີ້ດ້ວຍຄວາມ
ຖ່ອມຕົວທີ່ສຸດ, [ກ]ໄວ້ວາງໃຈໃນເຮົາ, ຢ່າ
ໝິ່ນປະໝາດຄົນທີ່ໝິ່ນປະໝາດ.
31 ແລະ ກ່ຽວກັບ [ກ]ຄຳສອນຕ່າງໆເຈົ້າ
ຢ່າເວົ້າເຖິງ, ແຕ່ເຈົ້າຈົ່ງປະກາດການກັບ
ໃຈ ແລະ [ຂ]ສັດທາໃນພຣະຜູ້ຊ່ອຍໃຫ້ລອດ,
ແລະ [ຄ]ການປົດບາບໂດຍການ [ງ]ບັບຕິ
ສະມາ, ແລະ ໂດຍ [ຈ]ໄຟ, ແທ້ຈິງແລ້ວ,
ແມ່ນແຕ່ [ສ]ພຣະວິນຍານບໍລິສຸດ.
32 ຈົ່ງເບິ່ງ, ນີ້ຄື [ກ]ບັນຍັດຂໍ້ໃຫຍ່ ແລະ ຂໍ້
ສຸດທ້າຍ ຊຶ່ງເຮົາຈະມອບໃຫ້ແກ່ເຈົ້າກ່ຽວ
ກັບເລື່ອງນີ້; ເພາະສິ່ງນີ້ພຽງພໍສຳລັບຊີວິດ
ປະຈຳວັນຂອງເຈົ້າ, ແມ່ນແຕ່ຈົນເຖິງວັນ
ສຸດທ້າຍຂອງຊີວິດເຈົ້າ.
33 ແລະ ເຈົ້າຈະໄດ້ຮັບຄວາມທຸກທໍລະ
ມານຖ້າເຈົ້າບໍ່ເອົາໃຈໃສ່ຕໍ່ [ກ]ຄຳແນະນຳ
ເຫລົ່ານີ້, ແທ້ຈິງແລ້ວ, ແມ່ນແຕ່ຕົວເຈົ້າເອງ
ແລະ ຊັບສິນຈະພິນາດໄປ.
34 ຈົ່ງ [ກ]ແບ່ງປັນຊັບສິນສ່ວນໜຶ່ງຂອງ
ເຈົ້າ, ແທ້ຈິງແລ້ວ, ແມ່ນແຕ່ທີ່ດິນສ່ວນໜຶ່ງ
ຂອງເຈົ້າ, ແລະ ທຸກສິ່ງຍົກເວັ້ນແຕ່ການ
ລ້ຽງດູຄອບຄົວຂອງເຈົ້າ.
35 ຈົ່ງຊຳລະ [ກ]ໜີ້ສິນທີ່ເຈົ້າໄດ້ [ຂ]ເຮັດສັນ
ຍາກັບຜູ້ພິມ. ຈົ່ງປົດປ່ອຍຕົວເຈົ້າເອງຈາກ
ຄວາມ [ຄ]ເປັນທາດ.
36 ຈົ່ງ [ກ]ປະເຮືອນຊານບ້ານຊ່ອງຂອງ
ເຈົ້າໄປ, ຍົກເວັ້ນແຕ່ຕອນເຈົ້າປາດຖະໜາ
ຢາກເຫັນຄອບຄົວຂອງເຈົ້າ;
37 ແລະ ຈົ່ງ [ກ]ກ່າວກັບທຸກຄົນຢ່າງເປີດ
ເຜີຍ; ແທ້ຈິງແລ້ວ, ໃຫ້ສັ່ງສອນ, ແນະນຳ,
ປະກາດ [ຂ]ຄວາມຈິງ, ແມ່ນແຕ່ດ້ວຍສຽງ

26 *ກ* ຄມພ ຈິງ, ຄວາມຈິງ.
27 *ກ* ຄມພ ຄົນຕ່າງຊາດ.
*ຂ* ຄມພ ຊາວຢິວ.
*ຄ* ອມນ 1:14–19; ມຊຢ 25:2–4; ຣລມ 8:21; 3 ນຟ 2:12–16.
*ງ* ຄມພ ພຣະເມຊີອາ.
28 *ກ* 1 ຕມທ 2:8. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄພ 20:47, 51; 23:6.
29 *ກ* ຄມພ ວຽກງານເຜີຍແຜ່.
30 *ກ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
31 *ກ* 2 ຕມທ 2:23–24.
*ຂ* ຄມພ ສັດທາ.
*ຄ* ຄມພ ປົດບາບ, ການປົດບາບ.
*ງ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຈ* ມທ 3:11.
*ສ* ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
32 *ກ* ຄພ 58:26–29.
33 *ກ* ຄມພ ພຣະບັນຍັດຂອງພຣະເຈົ້າ.
34 *ກ* ກຈກ 4:34–35.
35 *ກ* ຄມພ ໜີ້.
*ຂ* ອສ ເພື່ອຈ່າຍຄ່າການພິມພຣະຄຳພີມໍມອນຊຸດທຳອິດ.
*ຄ* ສພສ 22:7.
36 *ກ* ມທ 19:29.
37 *ກ* ຄພ 58:47; 68:8; 71:7.
*ຂ* ຄພ 75:4.

ດັງ, ດ້ວຍສຽງຂອງຄວາມປິຕິຍິນດີ, ໂຮ່
ຮ້ອງ—ໂຮຊັນນາ, ໂຮຊັນນາ, ຂໍພຣະນາມ
ຂອງອົງພຣະຜູ້ເປັນເຈົ້າ ຈົ່ງພຣະກະເສີມ
ສຳລານເຖີດ!
38 ຈົ່ງ [ກ]ອະທິຖານສະເໝີ, ແລະ ເຮົາຈະ
[ຂ]ຖອກເທພຣະວິນຍານຂອງເຮົາລົງມາເທິງ
ເຈົ້າ, ແລະ ພອນຂອງເຈົ້າຈະຍິ່ງໃຫຍ່—
ແທ້ຈິງແລ້ວ, ແມ່ນແຕ່ຫລາຍກວ່າທີ່ເຈົ້າ
ຈະໄດ້ຮັບຊັບສົມບັດຂອງແຜ່ນດິນໂລກ
ແລະ ຄວາມເສື່ອມໂຊມທີ່ມີຢູ່ໃນນັ້ນ.
39 ຈົ່ງເບິ່ງ, ເຈົ້າຈະອ່ານເລື່ອງນີ້ປາດສະ
ຈາກຄວາມປິຕິຍິນດີ ແລະ ເຊີດຊູໃຈໄດ້ບໍ?
40 ຫລື ເຈົ້າຈະແລ່ນຕໍ່ໄປເໝືອນດັ່ງຜູ້ນຳ
ທີ່ຕາບອດໄດ້ບໍ?
41 ຫລື ເຈົ້າຈະ [ກ]ຖ່ອມຕົວ ແລະ ອ່ອນ
ໂຍນ, ແລະ ປະພຶດຕົນຢ່າງສະຫລາດຢູ່
ຕໍ່ໜ້າເຮົາໄດ້ບໍ? ແທ້ຈິງແລ້ວ, ຈົ່ງ [ຂ]ມາຫາ
ເຮົາ ພຣະຜູ້ຊ່ວຍໃຫ້ລອດຂອງເຈົ້າເຖີດ.
ອາແມນ.

# ພາກທີ 20

*ການເປີດເຜີຍກ່ຽວກັບການຈັດຕັ້ງ ແລະ ການປົກຄອງຂອງສາດສະໜາຈັກ, ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ທີ່ ຫລື ໃກ້ເມືອງເຟແອດ, ລັດນິວຢອກ. ພາກສ່ວນໜຶ່ງຂອງການເປີດເຜີຍນີ້ ອາດຖືກມອບໃຫ້ນັບແຕ່ ໃນລະດູແລ້ງຂອງປີ 1829. ການເປີດເຜີຍທັງໝົດ, ຊຶ່ງຮູ້ຈັກກັນໃນເວລານັ້ນວ່າເປັນ ກົດ ແລະ ພັນທະສັນຍາ, ອາດຖືກບັນທຶກໄວ້ ບໍ່ດົນຫລັງຈາກວັນທີ 6 ເດືອນເມສາ, 1830 (ໃນວັນທີ່ສາດສະໜາຈັກໄດ້ຖືກຈັດຕັ້ງຂຶ້ນ). ສາດສະດາໄດ້ຂຽນວ່າ, "ພວກເຮົາໄດ້ຮັບຈາກພຣະອົງ [ພຣະເຢຊູຄຣິດ] ດັ່ງຕໍ່ໄປນີ້, ໂດຍວິນຍານແຫ່ງການທຳນາຍ ແລະ ການເປີດເຜີຍ; ຊຶ່ງບໍ່ພຽງແຕ່ໃຫ້ຂໍ້ມູນຢ່າງຫລວງຫລາຍແກ່ພວກເຮົາ, ແຕ່ຍັງໄດ້ຊີ້ບອກມື້ອັນແນ່ນອນແກ່ພວກເຮົານຳອີກ, ຊຶ່ງຕາມພຣະປະສົງ ແລະ ພຣະບັນຍັດຂອງພຣະອົງ, ພວກເຮົາຄວນຈະເລີ່ມຈັດຕັ້ງສາດສະໜາຈັກຂຶ້ນອີກເທື່ອໜຶ່ງຢູ່ເທິງແຜ່ນດິນໂລກ."*

*1–16, ພຣະຄຳພີມໍມອນພິສູດຄວາມສັກສິດຂອງວຽກງານໃນຍຸກສຸດທ້າຍ; 17–28, ຄຳສອນຂອງການສ້າງ, ການຕົກ, ການຊົດໃຊ້, ແລະ ການບັບຕິສະມາຖືກຢືນຢັນ; 29–37, ກົດຄວບຄຸມການກັບໃຈ, ການຮັບຮອງ, ຄວາມຊຳລະໃຫ້ບໍລິສຸດ, ແລະ ການຮັບບັບຕິສະມາໄດ້ຖືກຕັ້ງໄວ້; 38–67, ໜ້າທີ່ຂອງແອວເດີ, ປະໂລຫິດ, ຄູສອນ, ແລະ ມັກຄະນາຍົກໄດ້ຖືກສະຫລຸບໄວ້; 68–74, ໜ້າທີ່ຂອງສະມາຊິກ, ການໃຫ້ພອນແກ່ເດັກນ້ອຍ, ແລະ ແບບແຜນຂອງການບັບຕິສະມາຖືກເປີດເຜີຍ; 75–84, ຄຳອະທິຖານສຳລັບສິນລະລຶກ ແລະ ຂໍ້ບັງຄັບສຳລັບການປົກຄອງສະມາຊິກຂອງສາດສະໜາຈັກຖືກມອບໃຫ້.*

38 *ກ* ລກ 18:1;
2 ນຟ 32:9;
ຄພ 10:5.
*ຂ* ສພສ 1:23;
ກຈກ 2:17.
41 *ກ* ຄມພ ຖ່ອມຕົນ,
ຄວາມຖ່ອມຕົນ.
*ຂ* ມທ 11:28–30.

1 ການ [ກ]ຈັດຕັ້ງ [ຂ]ສາດສະໜາຈັກຂອງ
ພຣະຄຣິດໃນຍຸກສຸດທ້າຍນີ້, ໃນປີໜຶ່ງພັນ
ແປດຮ້ອຍສາມສິບ ນັບຕັ້ງແຕ່ການສະ
ເດັດມາຂອງພຣະຜູ້ເປັນເຈົ້າ ແລະ ພຣະ
ຜູ້ຊ່ວຍໃຫ້ລອດຂອງເຮົາ ພຣະເຢຊູຄຣິດ
ໃນເນື້ອໜັງ, ມັນຖືກ [ຄ]ຈັດຕັ້ງ ແລະ ສະຖາ
ປະນາຂຶ້ນຢ່າງຖືກຕ້ອງຕາມກົດໝາຍຂອງ
ປະເທດຂອງພວກເຮົາ, ໂດຍພຣະປະສົງ
ແລະ ພຣະບັນຍັດຂອງພຣະເຈົ້າ, ໃນ
ເດືອນທີສີ່, ແລະ ໃນວັນທີຫົກຂອງເດືອນ
ຊຶ່ງຖືກເອີ້ນວ່າເດືອນເມສາ—
2 ຊຶ່ງພຣະບັນຍັດນັ້ນໄດ້ມອບໃຫ້ແກ່
ໂຈເຊັບ ສະມິດ, ຜູ້ລູກ, ຜູ້ໄດ້ຖືກ [ກ]ເອີ້ນໂດຍ
ພຣະເຈົ້າ, ແລະ ຖືກແຕ່ງຕັ້ງເປັນ [ຂ]ອັກຄະ
ສາວົກຂອງພຣະເຢຊູຄຣິດ, ໃຫ້ເປັນ
[ຄ]ແອວເດີຄົນທຳອິດຂອງສາດສະໜາຈັກນີ້;
3 ແລະ ແກ່ອໍລີເວີ ຄາວເດີຣີ, ຜູ້ໄດ້ຖືກ
ເອີ້ນໂດຍພຣະເຈົ້າຄືກັນໃຫ້ເປັນອັກຄະ
ສາວົກຂອງພຣະເຢຊູຄຣິດ, ໃຫ້ເປັນ
ແອວເດີຄົນທີສອງຂອງສາດສະໜາຈັກນີ້,
ແລະ ຖືກແຕ່ງຕັ້ງພາຍໃຕ້ມືຂອງລາວ;
4 ແລະ ນີ້ເປັນໄປຕາມພຣະຄຸນຂອງ
ພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້
ລອດຂອງເຮົາ ພຣະເຢຊູຄຣິດ, ຜູ້ຊຶ່ງມີລັດ
ສະໝີພາບທັງມວນ, ທັງໃນຕອນນີ້ ແລະ
ຕະຫລອດການ. ອາແມນ.
5 ຫລັງຈາກມັນຖືກສະແດງໃຫ້ປະຈັກ
ຢ່າງແທ້ຈິງແກ່ແອວເດີຄົນທຳອິດນີ້ ວ່າ
ລາວໄດ້ຮັບການປົດບາບຂອງລາວແລ້ວ,
ລາວພັດໄດ້ໄປ [ກ]ພົວພັນກັບຄວາມອວດອົ່ງ
ຂອງໂລກອີກ;
6 ແຕ່ຫລັງຈາກກັບໃຈ, ແລະ ຖ່ອມຕົວ
ລົງຢ່າງຈິງໃຈ, ຜ່ານສັດທາ, ພຣະເຈົ້າຈຶ່ງ
ໄດ້ປະຕິບັດຕໍ່ລາວໂດຍ [ກ]ທູດທີ່ບໍລິສຸດ,
ຜູ້ທີ່ [ຂ]ໃບໜ້າຂອງເພິ່ນເປັນເໝືອນດັ່ງຟ້າ
ແມບເຫລື້ອມ, ແລະ ຜູ້ທີ່ອາພອນຂອງເພິ່ນ
ບໍລິສຸດ ແລະ ຂາວເໜືອກວ່າຄວາມຂາວ
ອື່ນໃດທັງສິ້ນ;
7 ແລະ ໄດ້ປະທານພຣະບັນຍັດໃຫ້ແກ່
ລາວ ຊຶ່ງໄດ້ດົນໃຈລາວ;
8 ແລະ ໄດ້ປະທານອຳນາດຈາກເບື້ອງ
ບົນໃຫ້ແກ່ລາວ, ຕາມ [ກ]ວິທີທີ່ໄດ້ຈັດຕຽມ
ໄວ້ກ່ອນແລ້ວ, ເພື່ອແປພຣະຄຳພີມໍມອນ;
9 ຊຶ່ງບັນຈຸບັນທຶກຂອງຜູ້ຄົນທີ່ຕົກໄປ,
ແລະ [ກ]ຄວາມສົມບູນຂອງ [ຂ]ພຣະກິດຕິຄຸນ
ຂອງພຣະເຢຊູຄຣິດເຖິງຄົນຕ່າງຊາດ ແລະ
ເຖິງຊາວຢິວນຳອີກ;
10 ຊຶ່ງໄດ້ມອບໃຫ້ໂດຍການດົນໃຈ,
ແລະ ໄດ້ຢືນຢັນໃຫ້ຄົນ [ກ]ອື່ນໆໂດຍການ
ປະຕິບັດຂອງເຫລົ່າທູດ, ແລະ [ຂ]ປະກາດຕໍ່
ໂລກໂດຍພວກເຂົາເຫລົ່ານັ້ນ—
11 ໂດຍພິສູດຕໍ່ໂລກວ່າ ພຣະຄຳພີອັນ
ສັກສິດເປັນ [ກ]ຄວາມຈິງ, ແລະ ວ່າພຣະເຈົ້າ
[ຂ]ດົນໃຈມະນຸດ ແລະ ເອີ້ນພວກເຂົາມາສູ່

---

**20** 1 *ກ* ຈສ—ປ 1:2.
*ຂ* 3 ນຟ 27:1–8.
ຄມພ ສາດສະໜາຈັກ, ຊື່ຂອງ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.
*ຄ* ຄພ 21:3.
2 *ກ* ຄມພ ສິດອຳນາດ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
*ຂ* ຄມພ ອັກຄະສາວົກ.
*ຄ* ຄມພ ແອວເດີ.
5 *ກ* ຈສ—ປ 1:28–29.
6 *ກ* ຈສ—ປ 1:30–35. ຄມພ ທູດ, ເທວະດາ.
*ຂ* ມທ 28:2–3.
8 *ກ* ຄມພ ອຸລີມ ແລະ ທຸມມີມ.
9 *ກ* ຈສ—ປ 1:34.
*ຂ* ຄມພ ພຣະກິດຕິຄຸນ.
10 *ກ* ມຣນ 7:29–32; ຄພ 5:11.
*ຂ* ເບິ່ງ "ປະຈັກພະຍານຂອງພະຍານສາມຄົນ" ແລະ "ປະຈັກພະຍານຂອງພະຍານແປດຄົນ" ນຳອີກ ໃນພາກໜ້າຕົ້ນຂອງພຣະຄຳພີມໍມອນ.
11 *ກ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
*ຂ* ຄມພ ດົນໃຈ, ການດົນໃຈ.

ວຽກງານອັນ [ຄ]ສັກສິດຂອງພຣະອົງໃນຍຸກ
ນີ້ ແລະ ຄົນລຸ້ນນີ້, ເຊັ່ນດຽວກັບຄົນໃນສະ
ໄໝບູຮານ;
12 ໂດຍວິທີນັ້ນ ຈະໄດ້ສະແດງໃຫ້ເຫັນ
ວ່າພຣະອົງເປັນພຣະເຈົ້າ [ກ]ອົງດຽວກັນນັ້ນ
ທັງມື້ວານນີ້, ມື້ນີ້, ແລະ ຕະຫລອດການ.
ອາແມນ.
13 ສະນັ້ນ, ໂດຍທີ່ມີພະຍານທີ່ຍິ່ງໃຫຍ່,
ໂລກຈະຖືກພິພາກສາໂດຍພະຍານເຫລົ່າ
ນີ້, ແມ່ນແຕ່ຫລາຍຕໍ່ຫລາຍຄົນຈະມີຄວາມ
ຮູ້ກ່ຽວກັບວຽກງານນີ້ໃນພາຍຂ້າງໜ້າ.
14 ແລະ ຄົນທີ່ ຮັບ ເອົາ ມັນ ໄວ້ດ້ວຍ
ສັດທາ, ແລະ ທຳງານທີ່ [ກ]ຊອບທຳ, ຈະໄດ້
ຮັບ [ຂ]ມົງກຸດແຫ່ງຊີວິດນິລັນດອນ;
15 ແຕ່ຄົນທີ່ເຮັດໃຈແຂງກະດ້າງໃນ
[ກ]ຄວາມບໍ່ເຊື່ອຖື, ແລະ ປະຕິເສດມັນ, ມັນ
ຈະກັບເປັນສິ່ງກ່າວໂທດພວກເຂົາເອງ—
16 ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວ
ໄວ້; ແລະ ພວກເຮົາ, ແອວເດີຂອງສາດ
ສະໜາຈັກ, ໄດ້ຍິນ ແລະ ເປັນພະຍານເຖິງ
ພຣະຄຳ ຂອງພຣະຜູ້ເດຊານຸພາບອັນຮຸ່ງ
ເຫລື້ອມຢູ່ເບື້ອງບົນ, ຂໍໃຫ້ລັດສະໝີພາບ
ເປັນຂອງພຣະອົງຕະຫລອດການ ແລະ
ຕະຫລອດໄປດ້ວຍເທີ້ນ. ອາແມນ.
17 ໂດຍສິ່ງເຫລົ່ານີ້ພວກເຮົາ [ກ]ຮູ້ວ່າ ມີ
[ຂ]ພຣະເຈົ້າໃນສະຫວັນ, ຜູ້ບໍ່ມີຂອບເຂດ
ແລະ ນິລັນດອນ, ຈາກເປັນນິດເຖິງເປັນ
ນິດ ເປັນພຣະເຈົ້າອົງດຽວນັ້ນທີ່ບໍ່ປ່ຽນ
ແປງ, ຜູ້ສ້າງຟ້າສະຫວັນ ແລະ ແຜ່ນດິນ
ໂລກ, ແລະ ທຸກສິ່ງທີ່ຢູ່ໃນນັ້ນ;
18 ແລະ ວ່າພຣະອົງໄດ້ [ກ]ສ້າງມະນຸດ,
ຊາຍ ແລະ ຍິງ, ຕາມ [ຂ]ຮູບຮ່າງລັກສະນະ
ຂອງພຣະອົງເອງ ແລະ ໃນຄວາມຄ້າຍ
ຄືກັນກັບພຣະອົງ, ພຣະອົງໄດ້ສ້າງພວກ
ເຂົາ;
19 ແລະ ໄດ້ປະທານ ພຣະ ບັນ ຍັດ ໃຫ້
ພວກເຂົາ ເພື່ອວ່າພວກເຂົາຄວນຈະ [ກ]ຮັກ
ແລະ [ຂ]ຮັບໃຊ້ພຣະອົງ, ພຣະເຈົ້າທີ່ຊົງພຣະ
ຊົນຢູ່ ແລະ ຈິງແທ້ແຕ່ອົງດຽວ, ແລະ ວ່າ
ພວກເຂົາຄວນ [ຄ]ນະມັດສະການແຕ່ພຣະ
ອົງເທົ່ານັ້ນ.
20 ແຕ່ໂດຍການລ່ວງລະເມີດກົດທີ່ສັກ
ສິດເຫລົ່ານີ້ ມະນຸດຈຶ່ງກັບມີ [ກ]ຕັນຫາໜ້າ
ມືດ ແລະ [ຂ]ຕໍ່າຊ້າ, ແລະ ໄດ້ ກາຍ ເປັນ
ມະນຸດທີ່ [ຄ]ຕົກໄປ.
21 ດັ່ງນັ້ນ, ພຣະເຈົ້າຜູ້ຊົງລິດອຳນາດ
ຍິ່ງໃຫຍ່ຈຶ່ງໄດ້ປະທານ [ກ]ພຣະບຸດອົງດຽວ
ທີ່ຖືກຳເນີດຂອງພຣະອົງ, ດັ່ງທີ່ມີຂຽນໄວ້ຢູ່
ໃນພຣະຄຳພີ ຊຶ່ງປະທານໃຫ້ກ່ຽວກັບພຣະ
ອົງ.
22 ພຣະ ອົງ ໄດ້ ທົນ ກັບ [ກ]ການ ລໍ້ ລອງ
ຕ່າງໆນາໆ ແຕ່ບໍ່ໄດ້ເອົາໃຈໃສ່ມັນ.
23 ພຣະ ອົງ ໄດ້ ຖືກ [ກ]ຄຶງ, ໄດ້ສິ້ນພຣະ
ຊົນ, ແລະ ໄດ້ [ຂ]ຟື້ນພຣະຊົນໃນມື້ທີສາມ;

11 *ຄ* ຄມພ ສັກສິດ, ຄວາມສັກສິດ.
12 *ກ* ຮຮ 13:8; 1 ນຟ 10:18–19; ມມ 9:9–10; ຄພ 35:1; 38:1–4.
14 *ກ* ຄມພ ຊອບທຳ, ຄວາມຊອບທຳ.
*ຂ* ຄມພ ສູງສົ່ງ, ຄວາມສູງສົ່ງ; ຊີວິດນິລັນດອນ.
15 *ກ* ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
17 *ກ* ຄພ 76:22–23.
*ຂ* ຢຊ 2:11. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
18 *ກ* ຄມພ ສ້າງ, ການສ້າງ.
*ຂ* ປຖກ 1:26–27; ມຊຢ 7:27; ອທ 3:14–17.
19 *ກ* ພບຍ 11:1; ມທ 22:37; ມຣນ 10:32; ຄພ 59:5–6.
*ຂ* ພບຍ 6:13–15. ຄມພ ຮັບໃຊ້, ການຮັບໃຊ້.
*ຄ* ຄມພ ນະມັດສະການ.
20 *ກ* ຄມພ ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ.
*ຂ* ຄມພ ມານ.
*ຄ* ຄມພ ມະນຸດທີ່ມີຈິດໃຈທຳມະດາ.
21 *ກ* ຄມພ ອົງດຽວທີ່ຖືກຳເນີດ.
22 *ກ* ມທ 4:1–11; 27:40.
23 *ກ* ຄມພ ຄຶງ, ການຄຶງ.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.

24 ແລະ ໄດ້ [ກ]ສະ ເດັດ ຂຶ້ນ ສູ່ ສະຫວັນ, ເພື່ອ ນັ່ງຢູ່ ທາງ ເບື້ອງຂວາພຣະຫັດ ຂອງ [ຂ]ພຣະບິດາ, ເພື່ອປົກຄອງດ້ວຍອຳນາດທີ່ ຊົງລິດຍິ່ງໃຫຍ່ຕາມພຣະປະສົງຂອງພຣະ ບິດາ;

25 ເພື່ອວ່າຫລາຍຕໍ່ຫລາຍຄົນທີ່ [ກ]ເຊື່ອ ແລະ ຮັບ ບັບຕິ ສະມາ ໃນ ພຣະ ນາມ ອັນ ສັກສິດຂອງພຣະອົງ, ແລະ [ຂ]ອົດທົນດ້ວຍ ສັດທາຈົນເຖິງທີ່ສຸດ, ຈະໄດ້ຮັບການຊ່ວຍ ໃຫ້ລອດ—

26 ບໍ່ພຽງ ແຕ່ ຄົນ ເຫລົ່າ ນັ້ນ ທີ່ ເຊື່ອ ຫລັງ ຈາກ ພຣະອົງ ໄດ້ ສະ ເດັດ ມາ ໃນ [ກ]ເວລາ ອັນ ຮຸ່ງ ໂລດ, ໃນ ເນື້ອ ໜັງ, ແຕ່ທຸກຄົນຕັ້ງ ແຕ່ຕົ້ນ, ແມ່ນແຕ່ຫລາຍຕໍ່ຫລາຍຄົນກ່ອນ ພຣະອົງສະເດັດມານຳອີກ, ຜູ້ເຊື່ອຖ້ອຍຄຳ ຂອງ [ຂ]ສາດສະດາຜູ້ບໍລິສຸດ, ຜູ້ໄດ້ກ່າວດັ່ງ ກັບວ່າພວກເພິ່ນໄດ້ຮັບການດົນໃຈໂດຍ [ຄ]ຂອງປະທານແຫ່ງພຣະວິນຍານບໍລິສຸດ, ຜູ້ໄດ້ [ງ]ເປັນພະຍານເຖິງພຣະອົງແທ້ໆໃນ ທຸກສິ່ງ, ຈະມີຊີວິດນິລັນດອນ,

27 ເຊັ່ນດຽວກັບຄົນທີ່ຈະມາທີຫລັງ, ຜູ້ ຈະເຊື່ອໃນ [ກ]ຂອງປະທານ ແລະ ການເອີ້ນ ຂອງພຣະເຈົ້າໂດຍພຣະວິນຍານບໍລິສຸດ, ຊຶ່ງ [ຂ]ເປັນພະຍານເຖິງພຣະບິດາ ແລະ ເຖິງ ພຣະບຸດ;

28 ຊຶ່ງພຣະບິດາ, ພຣະບຸດ, ແລະ ພຣະ ວິນຍານບໍລິສຸດ ເປັນ [ກ]ພຣະເຈົ້າດຽວ, ບໍ່ມີ ຂອບເຂດ ແລະ ນິລັນດອນ, ປາດສະຈາກ ທີ່ສຸດ. ອາແມນ.

29 ແລະ ພວກເຮົາຮູ້ວ່າ ມະນຸດທັງປວງ ຈະຕ້ອງ [ກ]ກັບໃຈ ແລະ ເຊື່ອໃນພຣະນາມ ຂອງພຣະເຢຊູຄຣິດ, ແລະ ນະມັດສະການ ພຣະ ບິດາ ໃນພຣະນາມຂອງພຣະອົງ, ແລະ ອົດທົນດ້ວຍ [ຂ]ສັດທາໃນພຣະນາມ ຂອງພຣະອົງຈົນເຖິງທີ່ສຸດ, ຖ້າບໍ່ດັ່ງນັ້ນ ເຂົາຈະບໍ່ໄດ້ຮັບການຊ່ວຍໃຫ້ [ຄ]ລອດໃນ ອານາຈັກຂອງພຣະເຈົ້າ.

30 ແລະ ພວກເຮົາຮູ້ວ່າ [ກ]ການຮັບຮອງ ຄວາມຊອບທຳຜ່ານ [ຂ]ພຣະຄຸນຂອງພຣະ ຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງ ພວກ ເຮົາ ພຣະ ເຢຊູຄຣິດ ແມ່ນທ່ຽງທຳ ແລະ ຈິງ;

31 ແລະ ພວກ ເຮົາ ກໍ ຮູ້ ອີກ ວ່າ [ກ]ການ ຊຳລະໃຫ້ບໍລິສຸດຜ່ານພຣະຄຸນຂອງພຣະຜູ້ ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງ ພວກ ເຮົາ ພຣະ ເຢຊູຄຣິດ ແມ່ນ ທ່ຽງ ທຳ ແລະ ຈິງ, ຕໍ່ທຸກຄົນຜູ້ຮັກ ແລະ ຮັບໃຊ້ພຣະ ເຈົ້າ ດ້ວຍສຸດ [ຂ]ພະລັງ, ຈິດໃຈ, ແລະ ກຳ ລັງຂອງເຂົາ.

32 ແຕ່ກໍເປັນໄປໄດ້ທີ່ມະນຸດຈະ [ກ]ຕົກໄປ ຈາກພຣະຄຸນ ແລະ ໜີໄປຈາກພຣະເຈົ້າທີ່ ຊົງພຣະຊົນຢູ່;

---

24 *ກ* ຄມພ ການສະເດັດ ຂຶ້ນສະຫວັນ.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະ ເຈົ້າ—ພຣະເຈົ້າອົງເປັນ ພຣະບິດາ; ພຣະບິດາຜູ້ສະຖິດ ຢູ່ໃນສະຫວັນ.
25 *ກ* ຄພ 35:2; 38:4; 45:5, 8; 68:9; 76:51–53.
*ຂ* ຄມພ ອົດທົນ, ຄວາມອົດທົນ.
26 *ກ* ຄພ 39:1–3.
*ຂ* ຢຄ 4:4; 7:11; ມຊຢ 13:33.
*ຄ* ມຊ 5:58. ຄມພ ພຣະວິນຍານບໍລິສຸດ.
*ງ* ຄມພ ພຣະເຢຊູຄຣິດ— ການທຳນາຍກ່ຽວກັບການ ກຳເນີດ ແລະ ການສິ້ນພຣະ ຊົນຂອງພຣະເຢຊູຄຣິດ.
27 *ກ* ຄພ 18:32.
*ຂ* ຄພ 42:17.
28 *ກ* ຢຮ 17:20–22; 3 ນຟ 11:27, 36. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
29 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຄມພ ສັດທາ.
*ຄ* ຄມພ ແຜນແຫ່ງການໄຖ່; ລອດ, ຄວາມລອດ.
30 *ກ* ຄມພ ຮັບຮອງ, ການຮັບຮອງ.
*ຂ* ຄມພ ພຣະຄຸນ.
31 *ກ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຂ* ພບຍ 6:5; ມຣນ 10:32.
32 *ກ* ຄມພ ກະບົດ, ການກະບົດ; ປະຖິ້ມຄວາມເຊື່ອ, ການ ປະຖິ້ມຄວາມເຊື່ອ.

33 ສະນັ້ນ ຂໍໃຫ້ສາດສະໜາຈັກຈົ່ງລະ
ວັງ ແລະ ອະທິຖານສະເໝີ, ຖ້າບໍ່ດັ່ງນັ້ນ
ເຂົາຈະຕົກໄປສູ່ [ກ]ການລໍ້ລວງ;
34 ແທ້ຈິງແລ້ວ, ແລະ ແມ່ນແຕ່ຄົນທີ່ໄດ້
ຮັບການຊຳລະໃຫ້ບໍລິສຸດແລ້ວກໍໃຫ້ລະວັງ
ຄືກັນ.
35 ແລະ ພວກເຮົາຮູ້ວ່າ ສິ່ງເຫລົ່ານີ້ຈິງ
ແລະ ສອດຄ່ອງກັບການເປີດເຜີຍຂອງ
ໂຢຮັນ, ທັງບໍ່ໄດ້ [ກ]ຕື່ມເຕີມ, ຫລື ຕັດອອກ
ຈາກ ຄຳທຳນາຍຂອງໜັງສືຂອງເພິ່ນ,
[ຂ]ພຣະຄຳພີອັນສັກສິດ, ຫລື ການເປີດເຜີຍ
ຂອງພຣະເຈົ້າ ຊຶ່ງຈະມາເຖິງຫລັງຈາກ
ນີ້ໂດຍຂອງປະທານ ແລະ ອຳນາດຂອງ
ພຣະວິນຍານບໍລິສຸດ, [ຄ]ສຸລະສຽງ ຂອງ
ພຣະເຈົ້າ, ຫລື ການປະຕິບັດຂອງເຫລົ່າ
ທູດ.
36 ແລະ ອົງພຣະຜູ້ເປັນເຈົ້າໄດ້ກ່າວມັນ
ໄວ້; ແລະ ກຽດ, ອຳນາດ ແລະ ລັດສະໝີ
ພາບ ຈົ່ງມີແດ່ພຣະນາມອັນສັກສິດຂອງ
ພຣະອົງ, ທັງຕອນນີ້ ແລະ ຕະຫລອດການ
ດ້ວຍເຖີດ. ອາແມນ.
37 *ແລະ ອີກເທື່ອໜຶ່ງ, ໂດຍທາງພຣະ
ບັນຍັດຕໍ່ສາດສະໜາຈັກກ່ຽວກັບວິທີບັບຕິ
ສະມາ*—ທຸກຄົນທີ່ຖ່ອມຕົວ ລົງຢູ່ຕໍ່ພຣະ
ພັກຂອງພຣະເຈົ້າ, ແລະ ມີຄວາມປາດຖະ
ໜາທີ່ຈະຮັບ [ກ]ບັບຕິສະມາ, ແລະ ອອກມາ
ດ້ວຍ [ຂ]ຫົວໃຈທີ່ຊອກຊ້ຳ ແລະ ວິນຍານ
ທີ່ສຳນຶກຜິດ, ແລະ ເປັນພະຍານຢູ່ຕໍ່ໜ້າ
ສາດສະໜາຈັກວ່າເຂົາໄດ້ກັບໃຈຢ່າງແທ້
ຈິງຈາກບາບທັງໝົດຂອງເຂົາ, ແລະ ເຕັມ
ໃຈທີ່ຈະຮັບເອົາ [ຄ]ພຣະນາມຂອງພຣະ
ເຢຊູຄຣິດໄວ້ກັບເຂົາ, ໂດຍມີ [ງ]ຄວາມຕັ້ງ
ໃຈທີ່ຈະຮັບໃຊ້ພຣະອົງຈົນເຖິງທີ່ສຸດ, ແລະ
ສະແດງໃຫ້ປະຈັກຢ່າງແທ້ຈິງດ້ວຍ [ຈ]ວຽກ
ງານຂອງເຂົາ ວ່າເຂົາໄດ້ຮັບເອົາພຣະວິນ
ຍານຂອງພຣະຄຣິດໄປສູ່ [ສ]ການປົດບາບ
ຂອງເຂົາ, ຈະໄດ້ຮັບເຂົ້າໃນສາດສະໜາ
ຈັກຂອງພຣະອົງໂດຍຮັບການບັບຕິສະມາ.
38 *ໜ້າທີ່ຂອງແອວເດີ, ປະໂລຫິດ, ຄູ
ສອນ, ມັກຄະນາຍົກ, ແລະ ສະມາຊິກຂອງ
ສາດສະໜາຈັກຂອງພຣະຄຣິດ*—[ກ]ອັກຄະ
ສາວົກເປັນແອວເດີ, ແລະ ເປັນການເອີ້ນ
ຂອງເຂົາທີ່ຈະໃຫ້ [ຂ]ບັບຕິສະມາ;
39 ແລະ [ກ]ແຕ່ງຕັ້ງແອວເດີ, ປະໂລຫິດ,
ຄູສອນ, ແລະ ມັກຄະນາຍົກຄົນອື່ນໆ;
40 ແລະ [ກ]ປະຕິບັດເຂົ້າຈີ່ ແລະ ເຫລົ້າ
ອະງຸ່ນ—ເຄື່ອງໝາຍແຫ່ງເນື້ອໜັງ ແລະ
ໂລຫິດຂອງພຣະຄຣິດ—
41 ແລະ [ກ]ຢືນຢັນຄົນທີ່ຮັບບັບຕິສະມາ
ເຂົ້າໃນສາດສະໜາຈັກ, ໂດຍການວາງ [ຂ]ມື
ເພື່ອການບັບຕິສະມາ ດ້ວຍໄຟ ແລະ ດ້ວຍ
[ຄ]ພຣະວິນຍານບໍລິສຸດ, ຕາມພຣະຄຳພີ;
42 ແລະ ສິດສອນ, ຊີ້ແຈງ, ແນະນຳ, ໃຫ້
ບັບຕິສະມາ, ແລະ ດູແລສາດສະໜາຈັກ;
43 ແລະ ຢືນຢັນສາດສະໜາຈັກໂດຍ
ການວາງມື, ແລະ ການມອບພຣະວິນຍານ
ບໍລິສຸດ;
44 ແລະ ນຳພາການປະຊຸມທັງໝົດ.

33 *ກ* ຄມພ ລໍ້ລວງ, ການລໍ້ລວງ.
35 *ກ* ພນມ 22:18–19.
*ຂ* ຄມພ ພຣະຄຳພີ.
*ຄ* ຄພ 18:33–36.
37 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* ຄມພ ຫົວໃຈທີ່ຊອກຊ້ຳ.
*ຄ* ມຊຢ 5:7–9; 18:8–10. ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
*ງ* ຄມພ ອົດທົນ, ຄວາມອົດທົນ.
*ຈ* ຢກບ 2:18. ຄມພ ວຽກງານ.
*ສ* ຄມພ ປົດບາບ, ການປົດບາບ.
38 *ກ* ຄມພ ອັກຄະສາວົກ.
*ຂ* 3 ນຟ 11:21–22.
39 *ກ* ມຣນ 3; ຄພ 107:58.
40 *ກ* ຄມພ ສິນລະລຶກ.
41 *ກ* ຄພ 33:11, 14–15; 55:3.
*ຂ* ຄມພ ມື, ການວາງ.
*ຄ* ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.

45 ແອວເດີຈະ [ກ]ດຳເນີນການປະຊຸມດັ່ງທີ່ພວກເຂົາຖືກນຳພາໂດຍພຣະວິນຍານບໍລິສຸດ, ຕາມພຣະບັນຍັດ ແລະ ການເປີດເຜີຍຈາກພຣະເຈົ້າ.

46 ໜ້າທີ່ຂອງ [ກ]ປະໂລຫິດຄື ສັ່ງສອນ, [ຂ]ສິດສອນ, ຊີ້ແຈງ, ແນະນຳ, ແລະ ໃຫ້ບັບຕິສະມາ, ແລະ ປະຕິບັດສິນລະລຶກ,

47 ແລະ ຢ້ຽມຢາມບ້ານເຮືອນຂອງສະມາຊິກແຕ່ລະຄົນ, ແລະ ແນະນຳເຂົາໃຫ້ [ກ]ອະທິຖານ [ຂ]ອອກສຽງ ແລະ ໃນບ່ອນລັບລີ້ ແລະ ເຮັດໜ້າທີ່ທຸກຢ່າງໃນ [ຄ]ຄອບຄົວ.

48 ແລະ ເຂົາສາມາດ [ກ]ແຕ່ງຕັ້ງປະໂລຫິດ, ຄູສອນ, ແລະ ມັກຄະນາຍົກຄົນອື່ນໆນຳອີກ.

49 ແລະ ເຂົາຈະຕ້ອງນຳພາການປະຊຸມເມື່ອບໍ່ມີແອວເດີຄົນອື່ນຢູ່ທີ່ນັ້ນ;

50 ແຕ່ເມື່ອມີແອວເດີຢູ່ທີ່ນັ້ນ, ເຂົາພຽງແຕ່ສັ່ງສອນ, ສິດສອນ, ຊີ້ແຈງ, ແນະນຳ, ແລະ ໃຫ້ບັບຕິສະມາເທົ່ານັ້ນ,

51 ແລະ ຢ້ຽມຢາມບ້ານເຮືອນຂອງສະມາຊິກແຕ່ລະຄົນ, ແລະ ແນະນຳເຂົາໃຫ້ອະທິຖານອອກສຽງ ແລະ ໃນບ່ອນລັບລີ້ ແລະ ເຮັດໜ້າທີ່ທຸກຢ່າງໃນຄອບຄົວ.

52 ໃນໜ້າທີ່ທັງໝົດນີ້ ປະໂລຫິດຈະຕ້ອງ [ກ]ຊ່ວຍເຫລືອແອວເດີໃນກໍລະນີຈຳເປັນ.

53 ໜ້າທີ່ຂອງ [ກ]ຄູສອນຄື [ຂ]ດູແລສາດສະໜາຈັກສະເໝີ, ແລະ ຢູ່ກັບພວກເຂົາ ແລະ ເຮັດໃຫ້ພວກເຂົາເຂັ້ມແຂງຂຶ້ນ;

54 ແລະ ເບິ່ງວ່າບໍ່ມີຄວາມຊົ່ວຮ້າຍຢູ່ໃນສາດສະໜາຈັກ, ທັງບໍ່ໃຫ້ມີ [ກ]ຄວາມເຄືອງແຄ້ນກັນ, ທັງບໍ່ໃຫ້ເວົ້າຕົວະ, ເວົ້າລັບຫລັງ, ຫລື ເວົ້າຈາ [ຂ]ບໍ່ດີ;

55 ແລະ ເບິ່ງວ່າສາດສະໜາຈັກປະຊຸມກັນເລື້ອຍໆ, ແລະ ໃຫ້ເບິ່ງອີກວ່າສະມາຊິກທຸກຄົນເຮັດໜ້າທີ່ຂອງຕົນ.

56 ແລະ ເຂົາຈະຕ້ອງນຳພາການປະຊຸມເມື່ອບໍ່ມີແອວເດີ ຫລື ປະໂລຫິດຢູ່ທີ່ນັ້ນ—

57 ແລະ ຈະໄດ້ຮັບການຊ່ວຍເຫລືອສະເໝີ, ໃນໜ້າທີ່ທັງໝົດຂອງເຂົາໃນສາດສະໜາຈັກ, ໂດຍ [ກ]ມັກຄະນາຍົກ, ໃນກໍລະນີຈຳເປັນ.

58 ແຕ່ທັງຄູສອນ ຫລື ມັກຄະນາຍົກບໍ່ມີສິດອຳນາດທີ່ຈະໃຫ້ບັບຕິສະມາ, ປະຕິບັດສິນລະລຶກ, ຫລື ວາງມື;

59 ເຖິງຢ່າງໃດກໍຕາມ, ເຂົາຈະເຕືອນ, ຊີ້ແຈງ, ແນະນຳ, ແລະ ສິດສອນ, ແລະ ເຊື້ອເຊີນທຸກຄົນໃຫ້ມາຫາພຣະຄຣິດ.

60 [ກ]ແອວເດີ, ປະໂລຫິດ, ຄູສອນ, ຫລື ມັກຄະນາຍົກທຸກຄົນ ຈະຖືກແຕ່ງຕັ້ງຕາມຂອງປະທານ ແລະ [ຂ]ການເອີ້ນຂອງພຣະເຈົ້າ; ແລະ ເຂົາຈະຖືກແຕ່ງຕັ້ງໂດຍອຳນາດຂອງພຣະວິນຍານບໍລິສຸດ, ຊຶ່ງມີຢູ່ໃນຄົນທີ່ແຕ່ງຕັ້ງເຂົາ.

61 ແອວເດີຫລາຍຄົນທີ່ປະກອບເປັນສາດສະໜາຈັກນີ້ຂອງພຣະຄຣິດ ຕ້ອງມາປະຊຸມກັນໃນກອງປະຊຸມໃຫຍ່ ທຸກສາມເດືອນ, ຫລື ເປັນບາງຄັ້ງຕາມທີ່ກອງປະຊຸມໃຫຍ່ດັ່ງກ່າວຈະຈັດການ ຫລື ກຳນົດຂຶ້ນ;

45 *ກ* ມຣນ 6:9; ຄພ 46:2.
46 *ກ* ຄພ 84:111; 107:61. ຄມພ ປະໂລຫິດ, ຖານະປະໂລຫິດແຫ່ງອາໂຣນ.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ.
47 *ກ* 1 ຕມທ 2:8.
*ຂ* ຄພ 19:28.
*ຄ* ຄມພ ຄອບຄົວ.
48 *ກ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
52 *ກ* ຄພ 107:14.
53 *ກ* ຄມພ ຄູສອນ, ຖານະປະໂລຫິດແຫ່ງອາໂຣນ.
*ຂ* ຄມພ ຍາມ, ຄົນຍາມ.
54 *ກ* 1 ທສນ 5:11–13.
*ຂ* ຄມພ ເວົ້າຈາບໍ່ດີ.
57 *ກ* ຄມພ ມັກຄະນາຍົກ.
60 *ກ* ຄມພ ແອວເດີ.
*ຂ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.

62 ແລະ ກອງປະຊຸມໃຫຍ່ດັ່ງກ່າວຈະຕ້ອງດຳເນີນທຸລະກິດອັນໃດກໍຕາມຂອງສາດສະໜາຈັກທີ່ຈຳເປັນຕ້ອງເຮັດໃນເວລານັ້ນ.

63 ແອວເດີຈະໄດ້ຮັບໃບອະນຸຍາດຂອງເຂົາ ຈາກ ແອວເດີຄົນອື່ນໆ, ໂດຍ ການ [ກ]ອອກສຽງຂອງສາດສະໜາຈັກທີ່ເຂົາຂຶ້ນຢູ່ກັບ, ຫລື ຈາກກອງປະຊຸມໃຫຍ່.

64 ປະໂລຫິດ, ຄູສອນ, ຫລື ມັກຄະນາຍົກແຕ່ລະຄົນ, ຜູ້ໄດ້ຮັບການແຕ່ງຕັ້ງໂດຍປະໂລຫິດ, ຈະຮັບເອົາໃບຢັ້ງຢືນຈາກເຂົາໃນເວລານັ້ນ, ຊຶ່ງ [ກ]ໃບຢັ້ງຢືນນັ້ນ, ເມື່ອມອບໃຫ້ແອວເດີ, ແລ້ວຈະເຮັດໃຫ້ເຂົາມີໃບອະນຸຍາດ, ຊຶ່ງໃຫ້ສິດອຳນາດເຂົາປະຕິບັດໜ້າທີ່ການເອີ້ນຂອງເຂົາ, ຫລື ເຂົາຈະໄດ້ຮັບມັນຈາກກອງປະຊຸມໃຫຍ່.

65 ບໍ່ມີໃຜຈະໄດ້ຮັບ [ກ]ການແຕ່ງຕັ້ງສູ່ຕຳແໜ່ງໃນສາດສະໜາຈັກນີ້, ບ່ອນທີ່ສາຂາຂອງສາດສະໜາຈັກຖືກຈັດຕັ້ງຂຶ້ນຢ່າງຖືກຕ້ອງ, ປາດສະຈາກການ [ຂ]ອອກສຽງຂອງໜ່ວຍສາດສະໜາຈັກນັ້ນ;

66 ແຕ່ແອວເດີທີ່ຄວບຄຸມ, ອະທິການສັນຈອນ, ສະມາຊິກສະພາສູງ, ມະຫາປະໂລຫິດ, ແລະ ແອວເດີ, ມີສິດທີ່ຈະແຕ່ງຕັ້ງ, ບ່ອນທີ່ບໍ່ມີສາຂາຂອງສາດສະໜາຈັກເພື່ອເອີ້ນໃຫ້ມີການອອກສຽງ.

67 ປະທານຂອງຖານະປະໂລຫິດສູງທຸກຄົນ (ຫລື ແອວເດີທີ່ຄວບຄຸມ), [ກ]ອະທິການ, ສະມາຊິກສະພາສູງ, ແລະ [ຂ]ມະຫາປະໂລຫິດ, ຈະໄດ້ຮັບການແຕ່ງຕັ້ງໂດຍການຊີ້ນຳຂອງ [ຄ]ສະພາສູງ ຫລື ກອງປະຊຸມໃຫຍ່ສາມັນ.

68 [ກ]*ໜ້າທີ່ຂອງສະມາຊິກຫລັງຈາກເຂົາຖືກ ຮັບ ໄວ້ ໂດຍການບັບຕິສະມາ*—ພວກແອວເດີ ຫລື ປະໂລຫິດ ຈະຕ້ອງມີເວລາພຽງພໍທີ່ຈະຊີ້ແຈງທຸກສິ່ງກ່ຽວກັບສາດສະໜາຈັກຂອງພຣະຄຣິດ ໃຫ້ເຂົາ [ຂ]ເຂົ້າໃຈ, ກ່ອນເຂົາຈະຮັບສ່ວນ [ຄ]ສິນລະລຶກ ແລະ ຮັບການຢືນຢັນໂດຍການວາງ [ງ]ມືຂອງພວກແອວເດີ, ເພື່ອວ່າທຸກສິ່ງຈະຖືກກະທຳໄປຕາມລະບຽບ.

69 ແລະ ສະມາຊິກ ຈະ ສະແດງ ໃຫ້ປະຈັກຢູ່ຕໍ່ໜ້າສາດສະໜາຈັກ, ແລະ ຢູ່ຕໍ່ໜ້າພວກແອວເດີນຳອີກ, ໂດຍການດຳເນີນຊີວິດ ແລະ ການເວົ້າຈາຢ່າງພຣະເຈົ້າ, ວ່າເຂົາມີຄ່າຄວນຕໍ່ມັນ, ວ່າຈະມີ [ກ]ວຽກງານ ແລະ ສັດທາ ທີ່ສອດຄ່ອງກັບພຣະຄຳພີທີ່ສັກສິດ—ການເດີນໄປໃນ [ຂ]ຄວາມບໍລິສຸດຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

70 ສະມາຊິກທຸກຄົນໃນສາດສະໜາຈັກຂອງພຣະຄຣິດທີ່ມີລູກ ຕ້ອງພາເຂົາມາຫາພວກແອວເດີຢູ່ຕໍ່ໜ້າສາດສະໜາຈັກ, ຜູ້ຈະວາງມືຂອງພວກເຂົາໃສ່ເທິງເຂົາໃນພຣະນາມຂອງພຣະເຢຊູຄຣິດ, ແລະ ໃຫ້ [ກ]ພອນເຂົາໃນພຣະນາມຂອງພຣະອົງ.

71 ບໍ່ມີຄົນໃດສາມາດຖືກຮັບເຂົ້າໃນສາດສະໜາຈັກຂອງພຣະຄຣິດໄດ້ ຍົກເວັ້ນແຕ່ເຂົາຈະເຖິງອາຍຸທີ່ [ກ]ຮູ້ຈັກຮັບຜິດ

63 *ກ* ຄມພ ເຫັນຊອບນຳກັນ.
64 *ກ* ຄພ 20:84; 52:41.
65 *ກ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* ຄພ 26:2. ຄມພ ເຫັນຊອບນຳກັນ.
67 *ກ* ຄມພ ອະທິການ.
*ຂ* ຄມພ ມະຫາປະໂລຫິດ.
*ຄ* ຄມພ ສະພາສູງ.
68 *ກ* ຄມພ ໜ້າທີ່.
*ຂ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
*ຄ* ຄມພ ສິນລະລຶກ.
*ງ* ຄມພ ມື, ການວາງ.
69 *ກ* ຢກບ 2:14–17.
*ຂ* ຄມພ ສັກສິດ, ຄວາມສັກສິດ.
70 *ກ* ຄມພ ພອນ, ໃຫ້ພອນ, ເປັນພອນ—ການໃຫ້ພອນແກ່ເດັກນ້ອຍ.
71 *ກ* ຄພ 18:42; 29:47; 68:25–27. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ເງື່ອນໄຂສຳລັບການບັບຕິສະມາ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.

ຊອບຢູ່ຕໍ່ພຣະພັກຂອງພຣະເຈົ້າ, ແລະ ສາ
ມາດ [ຂ]ກັບໃຈໄດ້.
72 [ກ]ການ ບັບຕິ ສະມາ ຈະ ຖືກ ປະ ຕິ ບັດ
ຕາມແບບແຜນດັ່ງຕໍ່ໄປນີ້ແກ່ທຸກຄົນທີ່ກັບ
ໃຈ—
73 ຄົນທີ່ຖືກເອີ້ນໂດຍພຣະເຈົ້າ ແລະ ມີ
ສິດ ອຳນາດ ຈາກພຣະ ເຢຊູຄຣິດ ໃຫ້ບັບຕິ
ສະມາ, ຈະລົງ ໄປ ໃນ ນ້ຳ ກັບຄົນທີ່ຂໍຮັບ
ບັບຕິສະມາ, ແລະ ຈະກ່າວດັ່ງຕໍ່ໄປນີ້ ຫລັງ
ຈາກ ກ່າວຊື່ຂອງ ເຂົາ: ໂດຍ ໄດ້ຮັບ ມອບ
ໝາຍ ຈາກພຣະເຢຊູຄຣິດ, ຂ້າພະເຈົ້າໃຫ້
ບັບຕິສະມາທ່ານ ໃນພຣະນາມຂອງພຣະ
ບິດາ, ແລະ ຂອງພຣະບຸດ, ແລະ ຂອງພຣະ
ວິນຍານບໍລິສຸດ. ອາແມນ.
74 ຈາກນັ້ນ ລາວຈະ [ກ]ຈຸ່ມເຂົາລົງໃນນ້ຳ,
ແລະ ຂຶ້ນມາຈາກນ້ຳອີກ.
75 ເປັນສິ່ງຈຳເປັນທີ່ສາດສະໜາຈັກຈະ
ຊຸມນຸມກັນເລື້ອຍໆເພື່ອ [ກ]ຮັບສ່ວນເຂົ້າຈີ່
ແລະ ເຫລົ້າອະງຸ່ນ ໃນການ [ຂ]ລະນຶກເຖິງ
ອົງພຣະເຢຊູ;
76 ແລະ ແອວເດີ ຫລື ປະໂລຫິດຈະປະ
ຕິບັດມັນ; ແລະ ເຂົາຈະປະຕິບັດມັນໃນ [ກ]ວິ
ທີນີ້—ເຂົາຈະຄຸເຂົ່າລົງພ້ອມກັບສາດສະ
ໜາຈັກ ແລະ ເອີ້ນຫາພຣະບິດາໃນຄຳອະ
ທິຖານຢ່າງຈິງຈັງ, ກ່າວວ່າ:
77 ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະຖິດ
ນິລັນດອນ, ພວກຂ້າພຣະອົງທູນຂໍພຣະ
ອົງໃນພຣະນາມຂອງພຣະບຸດຂອງພຣະ
ອົງ; ພຣະເຢຊູຄຣິດ, ໂປດປະທານພອນ
ແລະ ເຮັດໃຫ້ [ກ]ເຂົ້າຈີ່ນີ້ສັກສິດແກ່ຈິດວິນ
ຍານຂອງເຂົາທັງຫລາຍຜູ້ທີ່ຮັບສ່ວນ ເພື່ອ
ເຂົາຈະໄດ້ຮັບປະທານດ້ວຍຄວາມລະນຶກ
ເຖິງພຣະກາຍຂອງພຣະບຸດຂອງພຣະ
ອົງ, ແລະ ເປັນສັກຂີ [ຂ]ພະຍານຕໍ່ພຣະອົງ,
ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະຖິດນິລັນ
ດອນ, ວ່າເຂົາເຕັມໃຈ [ຄ]ຮັບພຣະນາມຂອງ
ພຣະບຸດຂອງພຣະອົງ, ແລະ ລະນຶກເຖິງ
ພຣະອົງຕະຫລອດເວລາ ແລະ [ງ]ຮັກສາ
ພຣະບັນຍັດຂອງພຣະອົງ ຊຶ່ງປະທານໃຫ້
ເຂົາ, ເພື່ອເຂົາຈະມີ [ຈ]ພຣະວິນຍານຂອງ
ພຣະອົງຢູ່ດ້ວຍຕະຫລອດເວລາ. ອາແມນ.
78 [ກ]ວິທີປະຕິບັດເຫລົ້າອະງຸ່ນ—ເຂົາຈະ
ຈັບ [ຂ]ຈອກຂຶ້ນມາ, ແລະ ກ່າວວ່າ:
79 ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະຖິດ
ນິລັນດອນ, ພວກຂ້າພຣະອົງທູນຂໍພຣະ
ອົງໃນພຣະນາມຂອງພຣະບຸດຂອງພຣະ
ອົງ, ພຣະເຢຊູຄຣິດ, ໂປດປະທານພອນ
ແລະ ເຮັດໃຫ້ [ກ]ເຫລົ້າອະງຸ່ນນີ້ສັກສິດແກ່
ຈິດວິນຍານຂອງເຂົາທັງຫລາຍຜູ້ທີ່ດື່ມ,
ເພື່ອເຂົາຈະເຮັດດ້ວຍຄວາມລະນຶກເຖິງ
ໂລຫິດຂອງພຣະບຸດຂອງພຣະອົງ ຊຶ່ງຫລັ່ງ
ເພື່ອເຂົາ; ເພື່ອເຂົາຈະເປັນສັກຂີພະຍານຕໍ່
ພຣະອົງ, ໂອ້ ພຣະອົງເຈົ້າ, ພຣະບິດາຜູ້ສະ
ຖິດນິລັນດອນ, ວ່າເຂົາລະນຶກເຖິງພຣະອົງ
ຕະຫລອດເວລາ, ເພື່ອເຂົາຈະມີພຣະວິນ
ຍານຂອງພຣະອົງຢູ່ດ້ວຍ. ອາແມນ.
80 ສະມາຊິກຄົນໃດຂອງສາດສະໜາ
ຈັກຂອງພຣະຄຣິດທີ່ລ່ວງລະເມີດ, ຫລື ພົບ
ເຫັນວ່າມີຄວາມຜິດ, ຈະຖືກຈັດການດັ່ງທີ່
ມີລະບຸໄວ້ຢູ່ໃນພຣະຄຳພີ.

---

71 *ຂ* ຄມພ ກັບໃຈ, ການກັບໃຈ.
72 *ກ* 3 ນຟ 11:22–28.
74 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ.
75 *ກ* ກຈກ 20:7.
*ຂ* ຄມພ ສິນລະລຶກ.
76 *ກ* ມຣນ 4.
77 *ກ* ລກ 22:19.
*ຂ* ມຊຢ 18:8–10; ຄພ 20:37.
*ຄ* ມຊຢ 5:8–12.
*ງ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
*ຈ* ຢຣ 14:16.
78 *ກ* ມຣນ 5.
*ຂ* ລກ 22:20.
79 *ກ* ຄພ 27:2–4.

81 ມັນຈະເປັນໜ້າທີ່ຂອງໜ່ວຍຕ່າງໆ
ຂອງສາດສະໜາຈັກ, ຊຶ່ງປະກອບເປັນ
ສາດສະໜາຈັກຂອງພຣະຄຣິດ, ທີ່ຈະສົ່ງຄູ
ສອນຄົນໜຶ່ງຂອງຕົນ ຫລື ຫລາຍກວ່ານັ້ນ
ໄປຮ່ວມກອງປະຊຸມໃຫຍ່ຕ່າງໆ ທີ່ຈັດຂຶ້ນ
ໂດຍພວກແອວເດີຂອງສາດສະໜາຈັກ,
82 ພ້ອມດ້ວຍລາຍ [ກ]ຊື່ຂອງສະມາຊິກທີ່
ຮ່ວມເຂົ້າກັບສາດສະໜາຈັກນັບແຕ່ກອງ
ປະຊຸມໃຫຍ່ເທື່ອຜ່ານມາ; ຫລື ສົ່ງໄປກັບ
ປະໂລຫິດຄົນໃດຄົນໜຶ່ງ; ເພື່ອວ່າລາຍຊື່
ທັງໝົດຂອງສາດສະໜາຈັກຈະຖືກບັນທຶກ
ໄວ້ໃນປຶ້ມໂດຍແອວເດີຄົນໜຶ່ງ, ຄົນໃດກໍ
ຕາມທີ່ແອວເດີຄົນອື່ນໆຈະມອບໝາຍໃຫ້
ເຮັດເປັນບາງຄັ້ງ;
83 ແລະ ພ້ອມນີ້, ຖ້າມີຄົນໃດຖືກ [ກ]ໄລ່
ອອກຈາກສາດສະໜາຈັກ, ເພື່ອວ່າຊື່ຂອງ
ເຂົາຈະຖືກລຶບອອກຈາກປຶ້ມບັນທຶກລາຍຊື່
ທົ່ວໄປຂອງສາດສະໜາຈັກ.
84 ສະມາຊິກທຸກຄົນທີ່ຍ້າຍຈາກໜ່ວຍ
ຂອງສາດສະໜາຈັກບ່ອນເຂົາອາໄສຢູ່,
ຖ້າໄປຫາໜ່ວຍຂອງສາດສະໜາຈັກບ່ອນ
ທີ່ບໍ່ມີໃຜຮູ້ຈັກເຂົາ, ຈະຕ້ອງເອົາຈົດໝາຍ
ທີ່ຢັ້ງຢືນວ່າເຂົາເປັນສະມາຊິກທີ່ເຂັ້ມແຂງ
ແລະ ຢູ່ໃນຄວາມດີງາມໄປນຳ, ຊຶ່ງໃບຢັ້ງ
ຢືນນັ້ນຈະຕ້ອງຖືກເຊັນໂດຍແອວເດີ ຫລື
ປະໂລຫິດຄົນໃດກໍໄດ້ ຖ້າສະມາຊິກຜູ້ໄດ້
ຮັບຈົດໝາຍຄຸ້ນເຄີຍກັບແອວເດີ ຫລື ປະ
ໂລຫິດຄົນນັ້ນ, ຫລື ຈະເຊັນໂດຍຄູສອນ
ຫລື ມັກຄະນາຍົກໃນໜ່ວຍຂອງສາດສະ
ໜາຈັກກໍໄດ້.

# ພາກທີ 21

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຟແອດ, ລັດນິວຢອກ, ວັນທີ 6 ເດືອນເມສາ, 1830. ການເປີດເຜີຍນີ້ໄດ້ມອບໃຫ້ຕອນຈັດຕັ້ງສາດສະໜາຈັກ, ໃນວັນທີ່ກ່າວຜ່ານມາ, ໃນບ້ານຂອງພີເຕີ ວິດເມີ ຜູ້ພໍ່. ຊາຍຫົກຄົນ, ຜູ້ໄດ້ຮັບບັບຕິສະມາ, ໄດ້ມີສ່ວນຮ່ວມນຳ. ໂດຍການອອກສຽງຢ່າງເປັນເອກະສັນ ຊາຍເຫລົ່ານັ້ນໄດ້ສະແດງຄວາມປາດຖະໜາ ແລະ ຄວາມຕັ້ງໃຈທີ່ຈະຈັດຕັ້ງ, ໃຫ້ເປັນໄປຕາມພຣະບັນຍັດຂອງພຣະເຈົ້າ (ເບິ່ງ ພາກທີ 20). ເຂົາເຈົ້າຍັງໄດ້ອອກສຽງສະໜັບສະໜູນໂຈເຊັບ ສະມິດ ຜູ້ລູກ ແລະ ອໍລີເວີ ຄາວເດີຣີ ອີກ ໃຫ້ເປັນເຈົ້າໜ້າທີ່ຄວບຄຸມຂອງສາດສະໜາຈັກ. ໂດຍການວາງມື, ຈາກນັ້ນໂຈເຊັບໄດ້ແຕ່ງຕັ້ງ ອໍລີເວີໃຫ້ເປັນແອວເດີຂອງສາດສະໜາຈັກ, ແລະ ອໍລີເວີ ກໍໄດ້ແຕ່ງຕັ້ງໂຈເຊັບໃນແບບດຽວກັນນັ້ນ. ຫລັງຈາກການປະຕິບັດສິນລະລຶກ, ໂຈເຊັບ ແລະ ອໍລີເວີໄດ້ວາງມືໃສ່ເທິງຫົວຂອງຜູ້ມາຮ່ວມທຸກຄົນເພື່ອມອບພຣະວິນຍານບໍລິສຸດ ແລະ ເພື່ອຢືນຢັນແຕ່ລະຄົນເປັນສະມາຊິກຂອງສາດສະໜາຈັກ.*

*1–3, ໂຈເຊັບ ສະມິດ ຖືກເອີ້ນໃຫ້ເປັນຜູ້ພະຍາກອນ, ຜູ້ແປ, ສາດສະດາ, ອັກຄະສາວົກ, ແລະ ແອວເດີ; 4–8, ຖ້ອຍຄຳຂອງເພິ່ນຈະນຳພາອຸດົມການຂອງຊີໂອນ; 9–12, ໄພ່ພົນຂອງພຣະເຈົ້າຈະເຊື່ອ ຖ້ອຍຄຳຂອງເພິ່ນ ເມື່ອເພິ່ນກ່າວໂດຍພຣະຜູ້ປອບໂຍນ.*

---

82 *ກ* ມຣນ 6:4.
83 *ກ* ອພຍ 32:33;
ແອວ 5:57;
ມຣນ 6:7.
ຄມພ ການຖືກໄລ່ອອກ.

1 ຈົ່ງເບິ່ງ, ຈະຕ້ອງມີການຂຽນ [ກ]ບັນທຶກ
ໄວ້ໃນທ່າມກາງພວກເຈົ້າ; ແລະ ໃນນັ້ນ
ເຈົ້າຈະຖືກເອີ້ນວ່າເປັນ [ຂ]ຜູ້ພະຍາກອນ,
ຜູ້ແປ, ສາດສະດາ, [ຄ]ອັກຄະສາວົກຂອງ
ພຣະເຢຊູຄຣິດ, ແອວເດີຂອງສາດສະໜາ
ຈັກຜ່ານທາງ ພຣະປະສົງຂອງພຣະເຈົ້າ
ອົງເປັນພຣະບິດາ, ແລະ ພຣະຄຸນຂອງອົງ
ພຣະເຢຊູຄຣິດເຈົ້າຂອງພວກເຈົ້າ,
2 ໂດຍໄດ້ຮັບການ [ກ]ດົນໃຈຈາກພຣະ
ວິນຍານບໍລິສຸດເພື່ອໃຫ້ວາງຮາກຖານ
ຂອງສາດສະໜາຈັກ, ແລະ ເພື່ອສ້າງມັນ
ຂຶ້ນເພື່ອສັດທາອັນສັກສິດທີ່ສຸດ.
3 ຊຶ່ງ [ກ]ສາດສະໜາຈັກໄດ້ຖືກ [ຂ]ຈັດຕັ້ງ
ແລະ ສະຖາປະນາຂຶ້ນໃນປີຂອງພຣະ
ຜູ້ເປັນເຈົ້າຂອງພວກເຈົ້າ ໜຶ່ງພັນແປດ
ຮ້ອຍສາມສິບ, ໃນເດືອນທີສີ່, ແລະ ໃນ
ວັນທີຫົກຂອງເດືອນ ຊຶ່ງຖືກເອີ້ນວ່າເດືອນ
ເມສາ.
4 ດັ່ງນັ້ນ, ໂດຍໝາຍເຖິງສາດສະໜາ
ຈັກ, ພວກເຈົ້າຈົ່ງເອົາໃຈໃສ່ຕໍ່ [ກ]ຖ້ອຍຄຳ
ແລະ ພຣະບັນຍັດທັງໝົດຂອງລາວ ຊຶ່ງ
ລາວຈະມອບໃຫ້ແກ່ພວກເຈົ້າເມື່ອລາວໄດ້
ຮັບມັນ, ໂດຍການເດີນໄປໃນ [ຂ]ຄວາມບໍລິ
ສຸດທັງໝົດຢູ່ຕໍ່ໜ້າເຮົາ;
5 ເພາະ [ກ]ຖ້ອຍຄຳທີ່ພວກເຈົ້າຈະໄດ້ຮັບ,
ກໍຄືກັບວ່າມັນມາຈາກປາກຂອງເຮົາເອງ,
ດ້ວຍຄວາມອົດທົນທີ່ສຸດ ແລະ ສັດທາທັງ
ໝົດ.
6 ເພາະໂດຍການເຮັດສິ່ງເຫລົ່ານີ້ [ກ]ປະຕູ
ນະລົກຈະເອົາຊະນະພວກເຈົ້າບໍ່ໄດ້; ແທ້
ຈິງແລ້ວ, ແລະ ອົງພຣະຜູ້ເປັນເຈົ້າຈະເຮັດ
ໃຫ້ອຳນາດແຫ່ງ [ຂ]ຄວາມມືດກະຈາຍໄປຕໍ່
ໜ້າພວກເຈົ້າ, ແລະ ເຮັດໃຫ້ຟ້າສະຫວັນ
[ຄ]ສັ່ນສະເທືອນເພື່ອຄວາມດີຂອງພວກ
ເຈົ້າ, ແລະ [ງ]ລັດສະໝີພາບຂອງພຣະນາມ
ຂອງພຣະອົງ.
7 ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້:
ລາວຜູ້ທີ່ເຮົາໄດ້ດົນໃຈໃຫ້ນຳພາອຸດົມການ
ຂອງ [ກ]ຊີໂອນໄປໜ້າ ໃນອຳນາດອັນຍິ່ງ
ໃຫຍ່ເພື່ອຄວາມດີ, ແລະ ຄວາມພາກພຽນ
ຂອງລາວ ເຮົາຮູ້, ແລະ ຄຳອະທິຖານຂອງ
ລາວ ເຮົາໄດ້ຍິນ.
8 ແທ້ຈິງແລ້ວ, ການຮ້ອງໄຫ້ຂອງລາວ
ເພື່ອຊີໂອນ ເຮົາໄດ້ເຫັນ, ແລະ ເຮົາຈະ
ເຮັດໃຫ້ລາວບໍ່ໂສກເສົ້າກັບນາງອີກຕໍ່ໄປ;
ເພາະວັນແຫ່ງຄວາມປິຕິຍິນດີຂອງລາວ
ມາເຖິງແລ້ວເພາະ [ກ]ການປົດບາບຂອງ
ລາວ, ແລະ ການສະແດງໃຫ້ປະຈັກເຖິງ
ພອນຂອງເຮົາຕໍ່ວຽກງານຂອງລາວ.
9 ເພາະ, ຈົ່ງເບິ່ງ, ເຮົາຈະ [ກ]ອວຍພອນ
ທຸກຄົນທີ່ອອກແຮງຢູ່ໃນ [ຂ]ສວນອະງຸ່ນ
ຂອງເຮົາ ດ້ວຍພອນອັນໃຫຍ່ຫລວງ, ແລະ
ເຂົາຈະເຊື່ອຖ້ອຍຄຳຂອງລາວ, ຊຶ່ງມອບ
ໃຫ້ລາວຜ່ານເຮົາໂດຍ [ຄ]ພຣະຜູ້ປອບໂຍນ,
ຊຶ່ງ [ງ]ສະແດງໃຫ້ປະຈັກວ່າ ພຣະເຢຊູຖືກ
[ຈ]ຄຶງໂດຍຄົນ [ສ]ບາບ ສຳລັບບາບຂອງ

**21** 1 *ກ* ຄພ 47:1; 69:3–8; 85:1.
*ຂ* ຄມພ ຜູ້ພະຍາກອນ.
*ຄ* ຄມພ ອັກຄະສາວົກ.
2 *ກ* ຄມພ ດົນໃຈ, ການດົນໃຈ.
3 *ກ* ຄມພ ສາດສະໜາຈັກ ຂອງພຣະເຢຊູຄຣິດແຫ່ງ ໄພ່ພົນຍຸກສຸດທ້າຍ.
*ຂ* ຄພ 20:1.
4 *ກ* ຄມພ ພຣະຄຳພີ.
*ຂ* ຄມພ ສັກສິດ, ຄວາມສັກສິດ.
5 *ກ* ຄພ 1:38.
ຄມພ ການສະໜັບສະໜູນຜູ້ນຳຂອງສາດສະໜາຈັກ; ສາດສະດາ.
6 *ກ* ມທ 16:18; ຄພ 10:69.
*ຂ* ກລຊ 1:12–13.
*ຄ* ຄພ 35:24.
*ງ* ຄມພ ລັດສະໝີພາບ.
7 *ກ* ຄມພ ຊີໂອນ.
8 *ກ* ຄພ 20:5–6.
9 *ກ* 1 ນຟ 13:37; ຢຄ 5:70–76.
*ຂ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
*ຄ* ຄມພ ພຣະຜູ້ປອບໂຍນ.
*ງ* ຄມພ ເປັນພະຍານ.
*ຈ* ຄມພ ຄຶງ, ການຄຶງ.
*ສ* ຄມພ ບາບ.

[ຊ]ໂລກ, ແທ້ຈິງແລ້ວ, ເພື່ອການປົດບາບໃຫ້
[ຍ]ໃຈທີ່ສຳນຶກຜິດ.
10 ດັ່ງນັ້ນ ເຮົາເຫັນສົມຄວນທີ່ລາວຈະ
ໄດ້ຮັບການ [ກ]ແຕ່ງຕັ້ງໂດຍເຈົ້າ, ອໍລີເວີ
ຄາວເດີຣີ ອັກຄະສາວົກຂອງເຮົາ;
11 ນີ້ເປັນພິທີການຢ່າງໜຶ່ງແກ່ເຈົ້າ, ວ່າ
ເຈົ້າເປັນແອວເດີໃຕ້ມືຂອງລາວ, ລາວໄດ້
ປະຕິບັດຕໍ່ເຈົ້າ [ກ]ກ່ອນ, ເພື່ອວ່າເຈົ້າຈະໄດ້
ເປັນແອວເດີໃຫ້ແກ່ສາດສະໜາຈັກນີ້ຂອງ
ພຣະຄຣິດ, ທີ່ມີນາມຂອງເຮົາ—
12 ແລະ ເປັນຜູ້ສັ່ງສອນຄົນທຳອິດຂອງ
ສາດສະໜາຈັກນີ້ ໃຫ້ແກ່ສາດສະໜາຈັກ,
ແລະ ຕໍ່ໂລກ, ແທ້ຈິງແລ້ວ, ຕໍ່ຄົນຕ່າງຊາດ;
ແທ້ຈິງແລ້ວ, ແລະ ອົງພຣະຜູ້ເປັນເຈົ້າໄດ້
ກ່າວດັ່ງນີ້, ເບິ່ງແມ, ເບິ່ງແມ! ຕໍ່ [ກ]ຊາວຢິວ
ນຳອີກ. ອາແມນ.

## ພາກທີ 22

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງແມນເຈດສະເຕີ, ລັດນິວຢອກ, ວັນທີ 16 ເດືອນເມສາ, 1830. ການເປີດເຜີຍນີ້ຖືກມອບໃຫ້ແກ່ ສາດສະໜາຈັກເນື່ອງຈາກວ່າຄົນທີ່ໄດ້ຮັບບັບຕິສະມາແລ້ວມີຄວາມປາດຖະໜາຢາກເຂົ້າຮ່ວມສາດສະໜາຈັກໂດຍບໍ່ຕ້ອງໄດ້ຮັບບັບຕິສະມາອີກ.*

*1, ການບັບຕິສະມາຄືພັນທະສັນຍາໃໝ່ ແລະ ເປັນນິດ; 2–4, ການບັບຕິສະມາດ້ວຍສິດອຳນາດເປັນສິ່ງຈຳເປັນ.*

1 ຈິ່ງ ເບິ່ງ, ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ
ພັນທະສັນຍາ [ກ]ເກົ່າທັງໝົດ ເຮົາໄດ້ເຮັດ
ໃຫ້ໝົດໄປດ້ວຍເລື່ອງນີ້; ແລະ ນີ້ຄືພັນທະ
ສັນຍາ [ຂ]ໃໝ່ ແລະ ເປັນນິດ, ແມ່ນແຕ່ສິ່ງ
ນັ້ນທີ່ເປັນມາຕັ້ງແຕ່ຕົ້ນ.
2 ດັ່ງນັ້ນ, ເຖິງແມ່ນມະນຸດໄດ້ຮັບບັບຕິ
ສະມາແລ້ວເປັນຮ້ອຍເທື່ອ ແຕ່ມັນກໍບໍ່ມີ
ປະໂຫຍດຫຍັງກັບເຂົາ, ເພາະພວກເຈົ້າບໍ່
ສາມາດເຂົ້າໄປໃນປະຕູຄັບແຄບໄດ້ໂດຍ
[ກ]ກົດຂອງໂມເຊ, ຫລື ໂດຍ [ຂ]ວຽກງານທີ່
ຕາຍແລ້ວຂອງພວກເຈົ້າ.
3 ເປັນເພາະວຽກງານທີ່ຕາຍແລ້ວຂອງ
ພວກເຈົ້ານັ້ນ ເຮົາຈຶ່ງໄດ້ເຮັດໃຫ້ມີການ
ສ້າງພັນທະສັນຍາສຸດທ້າຍ ແລະ ສາດສະ
ໜາຈັກນີ້ຖືກສ້າງຂຶ້ນໃຫ້ແກ່ເຮົາ, ແມ່ນແຕ່
ເຊັ່ນດຽວກັບໃນສະໄໝບູຮານ.
4 ດັ່ງນັ້ນ, ພວກເຈົ້າຈົ່ງເຂົ້າທາງ [ກ]ປະຕູ,
ດັ່ງທີ່ເຮົາໄດ້ບັນຊາ, ແລະ ບໍ່ [ຂ]ສະແຫວງ
ຫາທີ່ຈະແນະນຳພຣະເຈົ້າຂອງພວກເຈົ້າ.
ອາແມນ.

9 ຊ 1 ຢຮ 2:2. ຄມພ ໂລກ—ຜູ້ຄົນທີ່ບໍ່ເຊື່ອຟັງພຣະບັນຍັດ.
ຍ ຄມພ ຫົວໃຈທີ່ຊອກຊ້ຳ.
10 ກ ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
11 ກ ຄພ 20:2.
12 ກ 1 ນຟ 13:42; ຄພ 19:27; 90:8–9.
**22** 1 ກ ຮຣ 8:13; 3 ນຟ 12:46–47.
ຂ ຄພ 66:2. ຄມພ ພັນທະສັນຍາ; ພັນທະສັນຍາໃໝ່ ແລະ ເປັນນິດ.
2 ກ ຄລຕ 2:16. ຄມພ ກົດຂອງໂມເຊ.
ຂ ມຣນ 8:23–26.
4 ກ ມທ 7:13–14; ລກ 13:24; 2 ນຟ 9:41; 31:9, 17–18; 3 ນຟ 14:13–14. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
ຂ ຢຄ 4:10.

# ພາກທີ 23

*ການເປີດເຜີຍທີ່ຕິດຕໍ່ກັນຫ້າຢ່າງ ທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງແມນເຈດສະເຕີ, ລັດນິວຢອກ, ເດືອນເມສາ 1830, ແກ່ອໍລີເວີ ຄາວເດີຣີ, ໄຮຣຳ ສະມິດ, ແຊມໂຍ ເອັຈ ສະມິດ, ໂຈເຊັບ ສະມິດ ຜູ້ພໍ່, ແລະ ໂຈເຊັບ ໄນ້ ຜູ້ພໍ່. ເນື່ອງຈາກວ່າ ຫ້າຄົນທີ່ກ່າວມານັ້ນມີຄວາມປາດຖະໜາອັນແຮງກ້າຢາກຮູ້ຈັກໜ້າທີ່ຂອງຕົນ, ສາດສະດາຈຶ່ງໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການເປີດເຜີຍ ສຳລັບແຕ່ລະຄົນ.*

*1–7, ສານຸສິດໃນຍຸກຕອນຕົ້ນນີ້ໄດ້ຖືກເອີ້ນໃຫ້ສັ່ງສອນ, ແນະນຳ, ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ສາດສະໜາຈັກ.*

1 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, ອໍລີເວີ, ຈັກສອງສາມຄຳ. ຈົ່ງເບິ່ງ, ເຈົ້າເປັນສຸກແລ້ວ, ແລະ ເຈົ້າບໍ່ໄດ້ຢູ່ໃຕ້ການກ່າວໂທດ. ແຕ່ຈົ່ງລະວັງ [ກ]ຄວາມທະນົງຕົວ, ຖ້າບໍ່ດັ່ງນັ້ນເຈົ້າຈະເຂົ້າໄປສູ່ [ຂ]ການລໍ້ລວງ.

2 ຈົ່ງເຮັດໃຫ້ການເອີ້ນຂອງເຈົ້າເປັນທີ່ຮູ້ຈັກແກ່ສາດສະໜາຈັກ, ແລະ ຕໍ່ໂລກນຳອີກ, ແລະ ໃຈຂອງເຈົ້າຈະເປີດເພື່ອສັ່ງສອນຄວາມຈິງນັບແຕ່ນີ້ເປັນຕົ້ນໄປ ແລະ ຕະຫລອດການ. ອາແມນ.

3 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, ໄຮຣຳ, ຈັກສອງສາມຄຳ; ເພາະເຈົ້າກໍບໍ່ໄດ້ຢູ່ໃຕ້ການກ່າວໂທດຄືກັນ, ແລະ ໃຈຂອງເຈົ້າໄດ້ເປີດ, ແລະ ລີ້ນຂອງເຈົ້າໄດ້ຖືກນາຍອອກ; ແລະ ການເອີ້ນຂອງເຈົ້າຄືໃຫ້ຄຳແນະນຳ, ແລະ ໃຫ້ເພີ່ມ [ກ]ຄວາມເຂັ້ມແຂງໃຫ້ແກ່ສາດສະໜາຈັກເລື້ອຍໄປ. ດັ່ງນັ້ນ ໜ້າທີ່ຂອງເຈົ້າຄືຢູ່ກັບສາດສະໜາຈັກຕະຫລອດການ, ແລະ ນີ້ເພາະຄອບຄົວຂອງເຈົ້າ. ອາແມນ.

4 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າຈັກສອງສາມຄຳ, [ກ]ແຊມໂຍ; ເພາະເຈົ້າກໍບໍ່ໄດ້ຢູ່ໃຕ້ການກ່າວໂທດຄືກັນ, ແລະ ການເອີ້ນຂອງເຈົ້າຄືໃຫ້ຄຳແນະນຳ, ແລະ ໃຫ້ເພີ່ມຄວາມເຂັ້ມແຂງໃຫ້ແກ່ສາດສະໜາຈັກ; ແລະ ເຈົ້າຍັງບໍ່ໄດ້ຮັບການເອີ້ນໃຫ້ສັ່ງສອນຕໍ່ໂລກເທື່ອ. ອາແມນ.

5 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າຈັກສອງສາມຄຳ, ໂຈເຊັບ; ເພາະເຈົ້າກໍບໍ່ໄດ້ຢູ່ໃຕ້ການກ່າວໂທດຄືກັນ, ແລະ ການເອີ້ນຂອງເຈົ້າຄືໃຫ້ແນະນຳ, ແລະ ໃຫ້ເພີ່ມຄວາມເຂັ້ມແຂງໃຫ້ແກ່ສາດສະໜາຈັກ; ແລະ ນີ້ເປັນໜ້າທີ່ຂອງເຈົ້ານັບແຕ່ນີ້ເປັນຕົ້ນໄປ ແລະ ຕະຫລອດການ. ອາແມນ.

6 ຈົ່ງ ເບິ່ງ, ເຮົາ ສະແດງ ໃຫ້ ປະຈັກ ແກ່ເຈົ້າ, ໂຈເຊັບ ໄນ້, ໂດຍຖ້ອຍຄຳເຫລົ່ານີ້, ວ່າເຈົ້າຕ້ອງແບກ [ກ]ໄມ້ກາງແຂນຂອງເຈົ້າ, ຊຶ່ງເຈົ້າຕ້ອງ [ຂ]ອະທິຖານ [ຄ]ອອກສຽງຢູ່ຕໍ່ໜ້າໂລກ ທັງໃນບ່ອນລີ້ລັບນຳອີກ, ແລະ ໃນຄອບຄົວຂອງເຈົ້າ, ແລະ ໃນທ່າມກາງໝູ່ເພື່ອນຂອງເຈົ້າ, ແລະໃນທຸກໆແຫ່ງ.

7 ແລະ, ຈົ່ງ ເບິ່ງ, ມັນເປັນໜ້າທີ່ຂອງເຈົ້າທີ່ຈະ [ກ]ເຂົ້າຮ່ວມນຳສາດສະໜາຈັກທີ່ແທ້ຈິງ, ແລະ ໃຫ້ພາສາຂອງເຈົ້າເປັນຄຳແນະນຳເລື້ອຍໄປ, ເພື່ອເຈົ້າຈະໄດ້ຮັບລາງວັນຂອງຄົນທຳງານ. ອາແມນ.

**23** 1 *ກ* ຄມພ ຈອງຫອງ, ຄວາມຈອງຫອງ.
*ຂ* ຄມພ ລໍ້ລວງ, ການລໍ້ລວງ.
3 *ກ* ຄພ 81:4–5; 108:7.
4 *ກ* ຈສ—ປ 1:4.
6 *ກ* ມທ 10:38; 3 ນຟ 12:30.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຄ* ຄພ 20:47, 51.
7 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ຈຳເປັນ.

# ພາກທີ 24

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ອໍລີເວີ ຄາວເດີຣີ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນກໍລະກົດ 1830. ເຖິງແມ່ນວ່າເວລາຜ່ານໄປຍັງບໍ່ເຖິງສີ່ເດືອນນັບຕັ້ງແຕ່ສາດສະໜາຈັກຖືກຈັດຕັ້ງຂຶ້ນ, ແຕ່ການຂົ່ມເຫັງໄດ້ເລີ່ມຮຸນແຮງຫລາຍຂຶ້ນ, ແລະ ຜູ້ນຳຕ້ອງໄດ້ລີ້ຊ່ອນຕົວຢູ່ເປັນບາງເວລາ. ການເປີດເຜີຍສາມຢ່າງດັ່ງຕໍ່ໄປນີ້ ຖືກມອບໃຫ້ໃນເວລານີ້ເພື່ອເພີ່ມຄວາມເຂັ້ມແຂງ, ໃຫ້ກຳລັງໃຈ, ແລະ ໃຫ້ຄຳແນະນຳເຂົາເຈົ້າ.*

*1–9, ໂຈເຊັບ ສະມິດ ຖືກເອີ້ນໃຫ້ແປ, ສັ່ງສອນ, ແລະ ຊີ້ແຈງພຣະຄຳພີ; 10–12, ອໍລີເວີ ຄາວເດີຣີ ຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ; 13–19, ມີການເປີດເຜີຍກົດກ່ຽວກັບສິ່ງມະຫັດສະຈັນ, ການສາບແຊ່ງ, ການສັ່ນຝຸ່ນຈາກຕີນ, ແລະ ການເດີນທາງປາດສະຈາກກະເປົາເງິນ ຫລື ກະເປົາເຄື່ອງ.*

1 ຈົ່ງເບິ່ງ, ເຈົ້າຖືກເອີ້ນ ແລະ ຖືກເລືອກ
ໃຫ້ຂຽນພຣະຄຳພີມໍມອນ, ແລະ ມາສູ່
ການປະຕິບັດສາດສະໜາກິດຂອງເຮົາ;
ແລະ ເຮົາໄດ້ຍົກເຈົ້າຂຶ້ນຈາກຄວາມທຸກ
ທໍລະມານຂອງເຈົ້າ, ແລະ ໄດ້ແນະນຳ
ເຈົ້າ, ຈົນວ່າເຈົ້າໄດ້ຖືກປົດປ່ອຍຈາກສັດຕູ
ຂອງເຈົ້າ, ແລະ ເຈົ້າໄດ້ຖືກປົດປ່ອຍຈາກ
ອຳນາດຂອງຊາຕານ ແລະ ຈາກຄວາມ
ມືດ!
2 ເຖິງຢ່າງໃດກໍຕາມ, ເຈົ້າບໍ່ມີຂໍ້ແກ້ຕົວ
ກ່ຽວກັບ [ກ]ການລ່ວງລະເມີດຂອງເຈົ້າ; ເຖິງ
ຢ່າງໃດກໍຕາມ, ຈົ່ງໄປຕາມທາງຂອງເຈົ້າ
ແລະ ຢ່າເຮັດບາບອີກຕໍ່ໄປ.
3 ຈົ່ງ [ກ]ຂະຫຍາຍໜ້າທີ່ຂອງເຈົ້າ; ແລະ
ຫລັງ ຈາກ ເຈົ້າ ໄດ້ ຫວ່ານ ທົ່ງ ຂອງ ເຈົ້າ
ແລະ ດູແລ ມັນແລ້ວ, ໃຫ້ເຈົ້າຟ້າວໄປ
ຫາໜ່ວຍຂອງສາດສະໜາຈັກທີ່ເມືອງ
[ຂ]ໂຄນສະວຽວ, ເມືອງເຟແອດ, ແລະ ເມືອງ
ແມນເຈດສະເຕີ, ແລະ ພວກເຂົາຈະ [ຄ]ສະ
ໜັບສະໜູນເຈົ້າ; ແລະ ເຮົາຈະປະທານ
ພອນໃຫ້ແກ່ພວກເຂົາທັງທາງຝ່າຍວິນ
ຍານ ແລະ ທາງຝ່າຍໂລກ;
4 ແຕ່ຖ້າຫາກພວກເຂົາບໍ່ຮັບເອົາເຈົ້າ,
ເຮົາຈະສົ່ງການສາບແຊ່ງມາເທິງພວກເຂົາ
ແທນທີ່ຈະສົ່ງພອນ.
5 ແລະ ເຈົ້າຈົ່ງສືບຕໍ່ເອີ້ນຫາພຣະເຈົ້າ
ໃນນາມຂອງເຮົາ, ແລະ ຂຽນສິ່ງທີ່ຈະຖືກ
ມອບໃຫ້ເຈົ້າໂດຍ [ກ]ພຣະຜູ້ປອບໂຍນ,
ແລະ ຊີ້ແຈງພຣະຄຳພີທັງໝົດຕໍ່ສາດສະ
ໜາຈັກ.
6 ແລະ ມັນຈະຖືກມອບໃຫ້ເຈົ້າໃນເວລາ
ທີ່ເຈົ້າຈະ [ກ]ກ່າວ ແລະ ຂຽນ, ແລະ ພວກ
ເຂົາຈະໄດ້ຍິນມັນ, ຖ້າບໍ່ດັ່ງນັ້ນເຮົາຈະສົ່ງ
ການສາບແຊ່ງມາເທິງພວກເຂົາແທນທີ່ຈະ
ສົ່ງພອນ.
7 ເພາະເຈົ້າຈະອຸທິດ [ກ]ການຮັບໃຊ້ທັງ
ໝົດຂອງເຈົ້າໃນຊີໂອນ; ແລະ ໃນການນີ້
ເຈົ້າຈະມີພະລັງ.

**24** 2 *ກ* ຄພ 1:31–32.
3 *ກ* ຢຄ 1:19; 2:2.
*ຂ* ຄພ 26:1; 37:2.
*ຄ* ຄພ 70:12.
5 *ກ* ຄນພ ພຣະຜູ້ປອບໂຍນ.
6 *ກ* ອພຍ 4:12;
ມທ 10:19–20;
ລກ 12:11–12;
ຣລມ 5:18–19;
ຄພ 84:85; 100:5–8;
ມຊ 6:32.
7 *ກ* ຄນພ ຮັບໃຊ້, ການຮັບໃຊ້.

8 ຈົ່ງ [ກ]ອົດ ທົນ ກັບ [ຂ]ຄວາມ ທຸກ ທໍ ລະ ມານ, ເພາະເຈົ້າຈະມີຫລາຍ; ແຕ່ [ຄ]ຈົ່ງອົດທົນກັບມັນ, ເພາະ, ເບິ່ງແມ, ເຮົາຢູ່ນຳເຈົ້າ, ແມ່ນແຕ່ຈົນເຖິງວັນເວລາ [ງ]ສຸດທ້າຍຂອງເຈົ້າ.

9 ແລະ ໃນ ການ ອອກ ແຮງ ທາງ ຝ່າຍ ໂລກ ເຈົ້າຈະບໍ່ມີພະລັງ, ເພາະສິ່ງນີ້ບໍ່ແມ່ນການເອີ້ນຂອງເຈົ້າ. ຈົ່ງເອົາໃຈໃສ່ຕໍ່ [ກ]ການເອີ້ນຂອງເຈົ້າ ແລະ ເຈົ້າຈະມີສິ່ງທີ່ເຈົ້າຕ້ອງການເພື່ອຂະຫຍາຍໜ້າທີ່ຂອງເຈົ້າ, ແລະ ຊີ້ແຈງ ພຣະຄຳພີທັງໝົດ, ແລະ ສືບຕໍ່ໃນການວາງມື ແລະ ການຢືນຢັນໃນໜ່ວຍຂອງສາດສະໜາຈັກ.

10 ແລະ ອ້າຍນ້ອງຂອງເຈົ້າ ອໍລີເວີ ຈະສືບຕໍ່ເປັນພະຍານເຖິງນາມຂອງເຮົາຕໍ່ໂລກ, ແລະ ຕໍ່ສາດສະໜາຈັກນຳອີກ. ແລະ ລາວຈະບໍ່ຕ້ອງຄິດວ່າ ລາວກ່າວພຽງພໍແລ້ວໃນອຸດົມການຂອງເຮົາ; ແລະ ເບິ່ງແມ, ເຮົາຈະຢູ່ນຳລາວຈົນເຖິງທີ່ສຸດ.

11 ໃນເຮົາ ລາວຈະມີລັດສະໝີພາບ, ແລະ ບໍ່ແມ່ນຈາກລາວເອງ, ບໍ່ວ່າໃນຄວາມອ່ອນແອ ຫລື ໃນຄວາມເຂັ້ມແຂງ, ບໍ່ວ່າໃນພັນທະການ ຫລື ອິດສະລະ;

12 ແລະ ໃນ ທຸກເວລາ, ແລະ ໃນທຸກແຫ່ງ, ລາວຈະເປີດປາກຂອງລາວ ແລະ [ກ]ປະກາດພຣະກິດຕິຄຸນຂອງເຮົາຄືກັບວ່າສຽງ [ຂ]ແກ, ທັງເວັນ ແລະ ຄືນ. ແລະ ເຮົາຈະມອບພະລັງໃຫ້ລາວ ຢ່າງທີ່ບໍ່ຮູ້ມາກ່ອນໃນບັນດາມະນຸດ.

13 ຢ່າຮຽກຮ້ອງ [ກ]ສິ່ງມະຫັດສະຈັນ, ຍົກເວັ້ນແຕ່ເຮົາຈະ [ຂ]ບັນຊາເຈົ້າ, ຍົກເວັ້ນແຕ່ໃນການ [ຄ]ຂັບໄລ່ [ງ]ຜີມານ, [ຈ]ປິ່ນປົວຄົນເຈັບປ່ວຍ, ແລະ ແກ້ [ສ]ພິດງູ, ແລະ ແກ້ພິດຮ້າຍເຖິງຕາຍເທົ່ານັ້ນ;

14 ແລະ [ກ]ສິ່ງເຫລົ່ານີ້ເຈົ້າຈະບໍ່ເຮັດ, ຍົກເວັ້ນແຕ່ຖືກຮຽກຮ້ອງໃຫ້ເຮັດໂດຍຄົນທີ່ປາດຖະໜາມັນເທົ່ານັ້ນ, ເພື່ອວ່າພຣະຄຳພີຈະສຳເລັດຄົບຖ້ວນ; ເພາະເຈົ້າຈະເຮັດຕາມທີ່ມີຂຽນໄວ້.

15 ແລະ ໃນບ່ອນໃດກໍຕາມທີ່ເຈົ້າຈະ [ກ]ເຂົ້າໄປ, ແລະ ເຂົາບໍ່ຮັບເອົາເຈົ້າໃນນາມຂອງເຮົາ, ເຈົ້າຈົ່ງຝາກການສາບແຊ່ງແທນທີ່ຈະຝາກພອນ, ໂດຍການສັ່ນ [ຂ]ຝຸ່ນດິນອອກຈາກຕີນຂອງເຈົ້າໄວ້ເປັນປະຈັກພະຍານຕໍ່ຕ້ານພວກເຂົາ, ແລະ ລ້າງຕີນຂອງເຈົ້າຢູ່ຂ້າງທາງ.

16 ແລະ ເຫດການຈະບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ຈະຈັບກຸມເຈົ້າດ້ວຍຄວາມຮຸນແຮງ, ເຈົ້າຈົ່ງບັນຊາໃຫ້ເຂົາຖືກລົງທັນໃນນາມຂອງເຮົາ; ແລະ, ຈົ່ງເບິ່ງ, ເຮົາຈະລົງທັນເຂົາຕາມຖ້ອຍຄຳຂອງເຈົ້າ, ໃນເວລາອັນເໝາະສົມຂອງເຮົາເອງ.

17 ແລະ ຜູ້ໃດກໍຕາມທີ່ຈະໃຊ້ກົດໝາຍກັບເຈົ້າ ເຂົາຈະຖືກກ່າວໂທດດ້ວຍກົດໝາຍ.

18 ແລະ ເຈົ້າຈະບໍ່ເອົາ [ກ]ກະເປົາເງິນ ຫລື

---

8 ກ ຄມພ ອົດທົນ, ຄວາມອົດທົນ.
ຂ ຄມພ ຍາກລຳບາກ, ຄວາມຍາກລຳບາກ.
ຄ ຄມພ ອົດທົນ, ຄວາມອົດທົນ.
ງ ມທ 28:20.
9 ກ ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
12 ກ ຄມພ ສັ່ງສອນ.
ຂ ຄພ 34:6.
13 ກ ຄມພ ເຄື່ອງໝາຍ; ມະຫັດສະຈັນ, ການມະຫັດສະຈັນ.
ຂ 1 ນຟ 17:50.
ຄ ມຣກ 16:17.
ງ ຄມພ ວິນຍານ— ຜີມານຮ້າຍ.
ຈ ຄມພ ປິ່ນປົວ, ການປິ່ນປົວ.
ສ ກຈກ 28:3–9; ຄພ 84:71–72; 124:98–99.
14 ກ ຄມພ ການປະຕິບັດຕໍ່ຄົນເຈັບປ່ວຍ.
15 ກ ມທ 10:11–15.
ຂ ມຣກ 6:11; ລກ 10:11; ຄພ 60:15; 75:19–22; 99:4–5.
18 ກ ມທ 10:9–10; ລກ 10:4; ຄພ 84:78–79.

ກະເປົາເຄື່ອງໄປນຳ, ທັງບໍ່ມີໄມ້ຄ້ອນເທົ້າ,
ທັງບໍ່ໃຫ້ມີເສື້ອໃຫຍ່ສອງໂຕ, ເພາະສາດ
ສະໜາຈັກຈະມອບມັນໃຫ້ແກ່ເຈົ້າໃນຊົ່ວ
ໂມງທີ່ເຈົ້າຕ້ອງການອາຫານ ແລະ ເຄື່ອງ
ນຸ່ງຫົ່ມ, ແລະ ເກີບ ແລະ ເງິນຄຳ, ແລະ
ເຄື່ອງຂອງ.

19 ເພາະ ເຈົ້າ ຖືກ ເອີ້ນ ໃຫ້ [ກ]ລິ ງ່າ ສວນ
ອະງຸ່ນຂອງເຮົາ ດ້ວຍການລິງ່າເທື່ອໃຫຍ່
ຍິ່ງ, ແທ້ຈິງແລ້ວ, ແມ່ນແຕ່ເປັນເທື່ອສຸດ
ທ້າຍ; ແທ້ຈິງແລ້ວ, ແລະ ທຸກຄົນຜູ້ທີ່ເຈົ້າ
ໄດ້ [ຂ]ແຕ່ງຕັ້ງນຳອີກ, ແລະ ພວກເຂົາຈະ
ເຮັດ ແມ່ນແຕ່ຕາມແບບແຜນນີ້. ອາແມນ.

## ພາກທີ 25

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນກໍລະກົດ 1830 (ເບິ່ງ ຫົວຂໍ້ຂອງ ພາກທີ 24). ການເປີດເຜີຍນີ້ໄດ້ສະແດງໃຫ້ປະຈັກເຖິງພຣະປະສົງຂອງພຣະຜູ້ເປັນເຈົ້າແກ່ເອມມາ ສະມິດ, ຜູ້ເປັນພັນລະຍາຂອງສາດສະດາ.*

*1–6, ເອມມາ ສະມິດ, ສະຕີຜູ້ຖືກເລືອກ, ຖືກເອີ້ນໃຫ້ຊ່ວຍເຫລືອ ແລະ ປອບໂຍນສາມີຂອງນາງ; 7–11, ນາງໄດ້ຖືກເອີ້ນໃຫ້ຂຽນ, ໃຫ້ຊີ້ແຈງພຣະຄຳພີ, ແລະ ໃຫ້ເລືອກເພງສວດ; 12–14, ເພງຂອງຄົນຊອບທຳເປັນຄຳອະທິຖານຫາພຣະຜູ້ເປັນເຈົ້າ; 15–16, ຫລັກທຳຂອງການເຊື່ອຟັງໃນການເປີດເຜີຍນີ້ ແມ່ນເໝາະສົມຕໍ່ທຸກຄົນ.*

1 ຈົ່ງເຊື່ອຟັງສຸລະສຽງຂອງພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ໃນຂະນະ
ທີ່ເຮົາກ່າວກັບເຈົ້າ, ເອມມາ ສະມິດ, ທິດາ
ຂອງເຮົາ; ເພາະຕາມຄວາມຈິງ ເຮົາກ່າວ
ກັບເຈົ້າວ່າ ທຸກຄົນທີ່ໄດ້ [ກ]ຮັບພຣະກິດຕິ
ຄຸນຂອງເຮົາ ເປັນບຸດ ແລະ ທິດາໃນ [ຂ]ອາ
ນາຈັກຂອງເຮົາ.

2 ການເປີດເຜີຍທີ່ເຮົາປະທານໃຫ້ແກ່
ເຈົ້າແມ່ນກ່ຽວກັບພຣະປະສົງຂອງເຮົາ;
ແລະ ຖ້າຫາກເຈົ້າຊື່ສັດ ແລະ [ກ]ເດີນໄປໃນ
ທາງແຫ່ງ [ຂ]ຄຸນນະທຳຢູ່ຕໍ່ໜ້າເຮົາ, ແລ້ວ
ເຮົາຈະຮັກສາຊີວິດຂອງເຈົ້າໄວ້, ແລະ ເຈົ້າ
ຈະໄດ້ຮັບ [ຄ]ມູນມໍລະດົກໃນຊີໂອນ.
3 ຈົ່ງເບິ່ງ, [ກ]ບາບຂອງເຈົ້າໄດ້ຖືກອະໄພ
ໃຫ້ແລ້ວ, ແລະ ເຈົ້າເປັນສະຕີຜູ້ຖືກເລືອກ,
ຜູ້ຊຶ່ງເຮົາໄດ້ [ຂ]ເອີ້ນ.
4 ຢ່າຈົ່ມເລີຍກ່ຽວກັບສິ່ງທີ່ເຈົ້າຍັງບໍ່ໄດ້
ເຫັນ, ເພາະມັນຖືກປິດບັງຈາກເຈົ້າ ແລະ
ຈາກໂລກ, ຊຶ່ງມັນເປັນຄວາມສະຫລຽວ
ສະຫລາດຂອງເຮົາ ໃນເວລາທີ່ຈະມາເຖິງ.
5 ແລະ ໜ້າທີ່ຂອງການເອີ້ນຂອງເຈົ້າຄື
ທີ່ຈະເປັນຜູ້ [ກ]ປອບໂຍນຜູ້ຮັບໃຊ້ຂອງເຮົາ,
ໂຈເຊັບ ສະມິດ, ຜູ້ລູກ, ສາມີຂອງເຈົ້າ, ໃນ

19 *ກ* ຢຄ 5:61–74; ຄພ 39:17; 71:4.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
**25** 1 *ກ* ຢຮ 1:12. ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
*ຂ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
2 *ກ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ຂ* ຄມພ ຄຸນນະທຳ.
*ຄ* ຄພ 52:42; 64:30; 101:18. ຄມພ ຊີໂອນ.
3 *ກ* ມທ 9:2.
*ຂ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
5 *ກ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.

ຄວາມທຸກທໍລະມານຂອງລາວ, ດ້ວຍຖ້ອຍ
ຄຳທີ່ເຮັດໃຫ້ສະບາຍໃຈຂຶ້ນ, ໃນວິນຍານ
ແຫ່ງຄວາມອ່ອນໂຍນ.
6 ແລະ ເຈົ້າຈົ່ງໄປກັບລາວໃນເວລາທີ່
ລາວໄປ, ແລະ ເປັນຜູ້ຂຽນໃຫ້ລາວ, ໃນ
ຕອນທີ່ລາວບໍ່ມີຜູ້ຂຽນໃຫ້ລາວ, ເພື່ອວ່າ
ເຮົາຈະໄດ້ສົ່ງຜູ້ຮັບໃຊ້ຂອງເຮົາ, ອໍລີເວີ
ຄາວເດີຣີ, ໄປບ່ອນໃດກໍຕາມທີ່ເຮົາຕ້ອງ
ການ.
7 ແລະ ເຈົ້າຈະຖືກ [ກ]ແຕ່ງຕັ້ງພາຍໃຕ້
ມືຂອງລາວ ເພື່ອຊີ້ແຈງພຣະຄຳພີ, ແລະ
ເພື່ອແນະນຳສາດສະໜາຈັກ, ຕາມທີ່ມັນ
ຈະຖືກມອບໃຫ້ແກ່ເຈົ້າໂດຍພຣະວິນຍານ
ຂອງເຮົາ.
8 ເພາະລາວຈະວາງ [ກ]ມືຂອງລາວເທິງ
ເຈົ້າ, ແລະ ເຈົ້າຈະໄດ້ຮັບພຣະວິນຍານບໍລິ
ສຸດ, ແລະ ຈົ່ງມີເວລາເພື່ອການຂຽນ, ແລະ
ເພື່ອຮຽນຮູ້ໃຫ້ຫລາຍ.
9 ແລະ ເຈົ້າບໍ່ຕ້ອງຢ້ານກົວ, ເພາະສາມີ
ຂອງເຈົ້າຈະສະໜັບສະໜູນເຈົ້າໃນສາດ
ສະໜາຈັກ; ເພາະຕໍ່ພວກເຂົາ ມັນແມ່ນ
[ກ]ການເອີ້ນຂອງລາວ, ວ່າທຸກສິ່ງຈະຖືກ
[ຂ]ເປີດເຜີຍແກ່ພວກເຂົາ, ສິ່ງໃດກໍຕາມທີ່
ເຮົາຕ້ອງການ, ຕາມ ສັດທາຂອງພວກ
ເຂົາ.
10 ແລະ ຕາມຄວາມຈິງ ເຮົາກ່າວກັບ
ເຈົ້າວ່າ ເຈົ້າຈົ່ງປ່ອຍວາງ [ກ]ສິ່ງທີ່ເປັນຂອງ
[ຂ]ໂລກນີ້, ແລະ [ຄ]ສະແຫວງຫາສິ່ງທີ່ດີກວ່າ.
11 ແລະ ຈະໃຫ້ມັນແກ່ເຈົ້າ, ພ້ອມນີ້, ທັງ
ໃຫ້ເລືອກ [ກ]ເພງສວດອັນສັກສິດນຳອີກ,
ດັ່ງທີ່ຈະໃຫ້ແກ່ເຈົ້າ, ຊຶ່ງເປັນທີ່ພໍໃຈແກ່
ເຮົາ, ທີ່ຈະໃຫ້ມີຢູ່ໃນສາດສະໜາຈັກຂອງ
ເຮົາ.
12 ເພາະຈິດວິນຍານຂອງເຮົາເບີກບານ
ໃນ [ກ]ເພງຈາກ [ຂ]ໃຈ; ແທ້ຈິງແລ້ວ, ເພງຂອງ
ຄົນຊອບທຳເປັນຄຳອະທິຖານຫາເຮົາ,
ແລະ ຈະໄດ້ຮັບຄຳຕອບດ້ວຍພອນຢູ່ເທິງ
ຫົວຂອງພວກເຂົາ.
13 ດັ່ງນັ້ນ, ຈົ່ງລື້ນເລີງ ແລະ ປິຕິຍິນດີ
ເຖີດ, ແລະ ແນບສະໜິດຢູ່ກັບພັນທະສັນ
ຍາ ຊຶ່ງເຈົ້າໄດ້ເຮັດ.
14 ຈົ່ງດຳເນີນໃນວິນຍານແຫ່ງ [ກ]ຄວາມ
ອ່ອນໂຍນຕໍ່ໄປ, ແລະ ລະວັງ [ຂ]ຄວາມ
ທະນົງຕົວ. ຈົ່ງໃຫ້ຈິດວິນຍານຂອງເຈົ້າ
ເບີກບານໃນສາມີຂອງເຈົ້າ, ແລະ ຄຳສັນ
ລະເສີນທີ່ຈະມາເຖິງລາວ.
15 ຈົ່ງຮັກສາບັນຍັດຂອງເຮົາຕະຫລອດ
ໄປ, ແລະ ເຈົ້າຈະໄດ້ຮັບ [ກ]ມົງກຸດແຫ່ງ
[ຂ]ຄວາມຊອບທຳ. ແລະ ຍົກເວັ້ນແຕ່ເຈົ້າຈະ
ເຮັດສິ່ງນີ້, ບ່ອນທີ່ເຮົາຢູ່ ເຈົ້າຈະມາຫາ [ຄ]ບໍ່
ໄດ້.
16 ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ວ່ານີ້ຄື [ກ]ສຽງຂອງເຮົາເຖິງ
ທຸກຄົນ. ອາແມນ.

---

7 ກ ຄມພ ແຕ່ງຕັ້ງເປັນທາງການ, ການແຕ່ງຕັ້ງເປັນທາງການ.
8 ກ ຄມພ ມື, ການວາງ.
9 ກ ຄມພ ສາດສະດາ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
ຂ ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ; ເປີດເຜີຍ, ການເປີດເຜີຍ.
10 ກ ຄມພ ໂລບ, ຄວາມໂລບ; ຮັ່ງມີ, ຄວາມຮັ່ງມີ.
ຂ ຄມພ ຄວາມເປັນຢູ່ທາງໂລກ.
ຄ ອທ 12:4.
11 ກ ຄມພ ເພງສວດ.
12 ກ 1 ຂຄ 16:9. ຄມພ ຮ້ອງ.
ຂ ຄມພ ໃຈ.
14 ກ ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
ຂ ຄມພ ຈອງຫອງ, ຄວາມຈອງຫອງ.
15 ກ ຄມພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
ຂ ຄມພ ຊອບທຳ, ຄວາມຊອບທຳ.
ຄ ຢຮ 7:34.
16 ກ ຄພ 1:38.

# ພາກທີ 26

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ອໍລີເວີ ຄາວເດີຣີ, ແລະ ຈອນ ວິດເມີ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນກໍລະກົດ 1830 (ເບິ່ງ ຫົວຂໍ້ຂອງ ພາກທີ 24).*

*1, ເຂົາເຈົ້າໄດ້ຮັບການແນະນຳໃຫ້ສຶກສາພຣະຄຳພີ ແລະ ໃຫ້ສັ່ງສອນ; 2, ກົດແຫ່ງຄວາມເຫັນຊອບນຳກັນໄດ້ຮັບອະນຸມັດ.*

1 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ
ພວກເຈົ້າຈົ່ງອຸທິດເວລາແກ່ [ກ]ການສຶກສາ
ພຣະຄຳພີ, ແລະ ແກ່ການສັ່ງສອນ, ແລະ
ແກ່ການຢືນຢັນສາດສະໜາຈັກຢູ່ເມືອງ
[ຂ]ໂຄນສະວຽວ, ແລະ ແກ່ການປະຕິບັດ
ງານຂອງພວກເຈົ້າເທິງພື້ນແຜ່ນດິນ, ດັ່ງທີ່
ຈຳເປັນ, ຈົນກວ່າພວກເຈົ້າຈະໄປພາກຕາ
ເວັນຕົກເພື່ອຈັດກອງປະຊຸມໃຫຍ່ເທື່ອຕໍ່
ໄປ; ແລະ ຈາກນັ້ນ ຈະເຮັດໃຫ້ເປັນທີ່ຮູ້ຈັກ
ແກ່ພວກເຈົ້າ ວ່າພວກເຈົ້າຈະເຮັດສິ່ງໃດ.
2 ແລະ ທຸກສິ່ງຈະຕ້ອງເປັນໄປດ້ວຍ
[ກ]ການເຫັນຊອບນຳກັນໃນສາດສະໜາຈັກ,
ໂດຍການອະທິຖານ ແລະ ມີສັດທາຢ່າງ
ຫລວງຫລາຍ, ສຳລັບທຸກສິ່ງທີ່ພວກເຈົ້າ
ຈະໄດ້ຮັບໂດຍສັດທາ. ອາແມນ.

# ພາກທີ 27

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຮາມໂມນີ ລັດເພັນໂຊເວເນຍ, ເດືອນສິງຫາ 1830. ໃນການຕຽມປະຊຸມທາງສາດສະໜາ ຊຶ່ງໃນນັ້ນຈະປະຕິບັດສິນລະລຶກດ້ວຍເຂົ້າຈີ່ ແລະ ເຫລົ້າອະງຸ່ນ, ໂຈເຊັບໄດ້ອອກໄປຫາເຫລົ້າອະງຸ່ນ. ເພິ່ນໄດ້ພົບກັບທູດສະຫວັນອົງໜຶ່ງ ແລະ ໄດ້ຮັບການເປີດເຜີຍນີ້, ສ່ວນໜຶ່ງໄດ້ຖືກຂຽນໄວ້ໃນເວລານັ້ນ ແລະ ສ່ວນທີ່ເຫລືອຢູ່ໄດ້ຖືກຂຽນໄວ້ໃນເດືອນກັນຍາຕໍ່ມາ. ບັດນີ້ ນ້ຳໄດ້ຖືກໃຊ້ແທນເຫລົ້າອະງຸ່ນໃນກອງປະຊຸມສິນລະລຶກຂອງສາດສະໜາຈັກ.*

*1–4, ການອະທິບາຍກ່ຽວກັບເຄື່ອງໝາຍທີ່ຈະໃຊ້ໃນການຮັບສິນລະລຶກ; 5–14, ພຣະຄຣິດ ແລະ ຜູ້ຮັບໃຊ້ຂອງພຣະອົງ ຈາກທຸກຍຸກທຸກສະໄໝຈະຮັບສ່ວນສິນລະລຶກ; 15–18, ຈົ່ງສວມຍຸດທະພັນຄົບຊຸດຂອງພຣະເຈົ້າ.*

1 ຈົ່ງຟັງສຸລະສຽງຂອງພຣະເຢຊູຄຣິດ,
ພຣະຜູ້ເປັນເຈົ້າຂອງເຈົ້າ, ພຣະເຈົ້າຂອງ
ເຈົ້າ, ແລະ ພຣະຜູ້ໄຖ່ຂອງເຈົ້າ, ຊຶ່ງພຣະ
ຄຳຂອງພຣະອົງມີ [ກ]ຊີວິດຊີວາ ແລະ ມີພະ
ລັງ.
2 ເພາະ, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ບໍ່

**26** 1*ກ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
*ຂ* ຄພ 24:3; 37:2.
2*ກ* 1 ຊມອ 8:7; ມຊຢ 29:26. ຄມພ ເຫັນຊອບນຳກັນ.
**27** 1*ກ* ຮລມ 3:29; ຄພ 6:2.

ສຳຄັນວ່າເຈົ້າຈະກິນຫຍັງ ຫລື ເຈົ້າຈະດື່ມ
ຫຍັງ ເມື່ອເຈົ້າຮັບສ່ວນ [ກ]ສິນລະລຶກ, ຖ້າ
ຫາກມັນເປັນວ່າ ເຈົ້າກະທຳໄປເພາະການ
ທີ່ເຫັນແກ່ [ຂ]ລັດສະໝີພາບຂອງເຮົາແຕ່
ຢ່າງດຽວ—ລະນຶກເຖິງເນື້ອກາຍຂອງເຮົາ
ຕໍ່ພຣະບິດາ ຊຶ່ງຍອມຕາຍເພື່ອເຈົ້າ, ແລະ
[ຄ]ເລືອດຂອງເຮົາ ຊຶ່ງຫລັ່ງເພື່ອ [ງ]ການປົດ
ບາບຂອງເຈົ້າ.
3 ດັ່ງນັ້ນ, ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້
ແກ່ເຈົ້າ, ວ່າເຈົ້າຈະບໍ່ຊື້ເຫລົ້າອະງຸ່ນ ທັງບໍ່
ຊື້ເຫລົ້າປຸກຈາກສັດຕູຂອງເຈົ້າ;
4 ດັ່ງນັ້ນ, ເຈົ້າຈະບໍ່ດື່ມອັນໃດ ຍົກເວັ້ນ
ແຕ່ມັນຖືກເຮັດຂຶ້ນໃໝ່ຢູ່ໃນບັນດາພວກ
ເຈົ້າ; ແທ້ຈິງແລ້ວ, ໃນອານາຈັກຂອງພຣະ
ບິດາຂອງເຮົາ ຊຶ່ງຈະຖືກສ້າງຂຶ້ນເທິງແຜ່ນ
ດິນໂລກ.
5 ຈົ່ງ ເບິ່ງ, ນີ້ ເປັນ ຄວາມ ສະຫລຽວ
ສະຫລາດຂອງເຮົາ; ດັ່ງນັ້ນ, ຢ່າປະຫລາດ
ໃຈເລີຍ, ເພາະຊົ່ວໂມງ ຈະມາເຖິງ ເມື່ອ
ເຮົາຈະ [ກ]ດື່ມໝາກຜົນຂອງຕົ້ນອະງຸ່ນຢູ່
ເທິງແຜ່ນດິນໂລກກັບເຈົ້າ, ແລະ ກັບ [ຂ]ໂມ
ໂຣໄນ, ຜູ້ເຮົາໄດ້ສົ່ງມາຫາເຈົ້າເພື່ອເປີດ
ເຜີຍພຣະຄຳພີມໍມອນ, ທີ່ບັນຈຸຄວາມສົມ
ບູນຂອງພຣະກິດຕິຄຸນອັນເປັນນິດຂອງ
ເຮົາ, ຜູ້ຊຶ່ງເຮົາໄດ້ມອບຂໍກະແຈຂອງບັນ
ທຶກ [ຄ]ກິ່ງງ່າຂອງເອຟະຣາອິມໃຫ້;
6 ແລະ ກັບ [ກ]ອີລາຍນຳອີກ, ຜູ້ຊຶ່ງເຮົາໄດ້
ມອບຂໍກະແຈແຫ່ງການເຮັດໃຫ້ເກີດການ
ຟື້ນຟູຂອງທຸກສິ່ງໃຫ້ ທີ່ກ່າວໂດຍປາກ
ຂອງສາດສະດາຜູ້ບໍລິສຸດທຸກຄົນ ນັບແຕ່
ການເລີ່ມຕົ້ນຂອງໂລກ, ກ່ຽວກັບຍຸກສຸດ
ທ້າຍ;
7 ແລະ ກັບ ໂຢຮັນ ບຸດຂອງຊາຂາຣີຢາ
ນຳ ອີກ, ຊຶ່ງ ຊາຂາ ຣີຢາ ຄົນ ນັ້ນ ທີ່ເພິ່ນ
([ກ]ອີລາຍ) ໄດ້ມາຢ້ຽມຢາມ ແລະ ໃຫ້ສັນ
ຍາວ່າ ລາວຈະມີລູກຊາຍ, ແລະ ເຂົາຈະມີ
ຊື່ວ່າ [ຂ]ໂຢຮັນ, ແລະ ເຂົາຈະເຕັມໄປດ້ວຍ
ວິນຍານຂອງອີລາຍ;
8 ຊຶ່ງໂຢຮັນຄົນນັ້ນ ທີ່ເຮົາໄດ້ສົ່ງມາຫາ
ເຈົ້າ, ຜູ້ຮັບໃຊ້ຂອງເຮົາ, ໂຈເຊັບ ສະມິດ,
ຜູ້ລູກ, ແລະ ອໍລີເວີ ຄາວເດີຣີ, ເພື່ອແຕ່ງຕັ້ງ
ເຈົ້າຕໍ່ [ກ]ຖານະປະໂລຫິດທຳອິດ ຊຶ່ງເຈົ້າໄດ້
ຮັບ, ເພື່ອເຈົ້າຈະຖືກເອີ້ນ ແລະ [ຂ]ແຕ່ງຕັ້ງ
ເໝືອນດັ່ງ [ຄ]ອາໂຣນ;
9 ແລະ ກັບ [ກ]ເອລີຢານຳອີກ, ຜູ້ຊຶ່ງເຮົາ
ໄດ້ມອບຂໍກະແຈແຫ່ງອຳນາດຂອງການ
[ຂ]ຫັນໃຈພໍ່ມາຫາລູກ, ແລະ ຫັນໃຈລູກໄປ
ຫາພໍ່, ເພື່ອວ່າທັງແຜ່ນດິນໂລກຈະບໍ່ຖືກ
ລົງທັນດ້ວຍຄຳສາບແຊ່ງ;
10 ແລະ ກັບໂຢເຊັບ ແລະ ຢາໂຄບ,
ແລະ ອີຊາກ, ແລະ ອັບຣາຮາມ, ບັນພະບຸ
ລຸດຂອງເຈົ້ານຳອີກ, ຊຶ່ງໂດຍຜູ້ຄົນເຫລົ່າ
ນັ້ນ [ກ]ຄຳສັນຍາຍັງຄົງຢູ່;
11 ແລະ ກັບມີຄາເອນນຳອີກ, ຫລື

2 ກ ຄມພ ສິນລະລຶກ.
ຂ ຄມພ ລັດສະໝີພາບ.
ຄ ຄມພ ເລືອດ, ໂລຫິດ.
ງ ຄມພ ປົດບາບ, ການປົດບາບ.
5 ກ ມທ 26:29; ມຣກ 14:25; ລກ 22:18.
ຂ ຈສ—ປ 1:30–34.
ຄ ອຊກ 37:16. ຄມພ ເອຟະຣາອິມ—ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ.
6 ກ ຄມພ ອີລາຍ.
7 ກ ລກ 1:17–19.
ຂ ລກ 1:13; ຄພ 84:27–28.
8 ກ ຄພ 13. ຄມພ ຖານະປະໂລຫິດແຫ່ງອາໂຣນ.
ຂ ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
ຄ ອພຍ 28:1–3, 41; ຄພ 107:13.
9 ກ 1 ກສ 17:1–22; 2 ກສ 1–2; ຄພ 2; 110:13–16; ຈສ—ປ 1:38–39. ຄມພ ເອລີຢາ.
ຂ ຄມພ ລຳດັບການສືບເຊື້ອສາຍ.
10 ກ ຄມພ ພັນທະສັນຍາຂອງອັບຣາຮາມ.

[ກ]ອາດາມ, ບິດາຂອງຄົນທັງປວງ, ເຈົ້າຊາຍຂອງຄົນທັງປວງ; ຜູ້ມີຊີວິດ ຢູ່ຕະຫລອດໄປ;

12 ແລະ ກັບ ເປໂຕ, ແລະ ຢາ ໂກ ໂບ, ແລະ ໂຢຮັນນຳອີກ, ຜູ້ຊຶ່ງເຮົາໄດ້ສົ່ງມາຫາເຈົ້າ, ຊຶ່ງເຮົາໄດ້ [ກ]ແຕ່ງຕັ້ງເຈົ້າ ແລະ ຢືນຢັນເຈົ້າເປັນ [ຂ]ອັກຄະສາວົກ, ແລະ [ຄ]ເປັນພະຍານພິເສດເຖິງນາມຂອງເຮົາ, ແລະ ຖືຂໍກະແຈຂອງການປະຕິບັດສາດສະໜາກິດ ແລະ ໃນສິ່ງດຽວກັບທີ່ເຮົາໄດ້ເປີດເຜີຍແກ່ພວກເຂົາ;

13 ແກ່ຄົນເຫລົ່ານັ້ນ ເຮົາໄດ້ [ກ]ມອບ [ຂ]ຂໍກະແຈແຫ່ງອານາຈັກຂອງເຮົາໃຫ້, ແລະ ມອບ [ຄ]ຍຸກສະໄໝແຫ່ງ [ງ]ພຣະກິດຕິຄຸນເປັນ [ຈ]ເທື່ອສຸດທ້າຍ ໃຫ້; ແລະ ສຳລັບ [ສ]ຄວາມສົມບູນແຫ່ງເວລາ, ຊຶ່ງໃນນັ້ນເຮົາຈະເຕົ້າໂຮມທຸກສິ່ງ [ຊ]ເຂົ້າກັນ, ທັງສິ່ງໃນສະຫວັນ, ແລະ ສິ່ງເທິງແຜ່ນດິນໂລກ;

14 ແລະ ກັບທຸກຄົນນຳອີກ ຜູ້ທີ່ພຣະບິດາຂອງເຮົາໄດ້ [ກ]ປະທານໃຫ້ເຮົາຈາກໂລກນີ້.

15 ດັ່ງນັ້ນ, ຈົ່ງລົ້ນເລີງ ແລະ ປິຕິຍິນດີເຖີດ, ແລະ ຈົ່ງຄາດແອວເຈົ້າ, ແລະ ຈົ່ງຖື [ກ]ຍຸດທະພັນຄົບຊຸດຂອງເຮົາ, ເພື່ອວ່າເຈົ້າຈະສາມາດຕ້ານທານກັບວັນອັນຊົ່ວຮ້າຍໄດ້, ຫລັງຈາກທີ່ເຈົ້າໄດ້ເຮັດທຸກສິ່ງທຸກຢ່າງ, ເພື່ອວ່າເຈົ້າຈະສາມາດ [ຂ]ຕ້ານທານກັບມັນໄດ້.

16 ສະນັ້ນ, ຈົ່ງ ຢືນ ເຖີດ, ໂດຍ [ກ]ຄາດແອວເຈົ້າໄວ້ດ້ວຍ [ຂ]ຄວາມຈິງ, ໂດຍມີ [ຄ]ແຜ່ນປົກເອິກແຫ່ງ [ງ]ຄວາມຊອບທຳ, ແລະ ສວມຕີນຂອງເຈົ້າດ້ວຍການຕຽມພຣະກິດຕິຄຸນແຫ່ງ [ຈ]ສັນຕິສຸກ, ຊຶ່ງເຮົາໄດ້ສົ່ງ [ສ]ເຫລົ່າທູດຂອງເຮົາມາມອບໃຫ້ແກ່ເຈົ້າ;

17 ຈົ່ງສວມເຄື່ອງປ້ອງກັນແຫ່ງສັດທາ ຊຶ່ງໃນນັ້ນເຈົ້າຈະສາມາດດັບລູກສອນ [ກ]ໄຟທັງໝົດຂອງຄົນຊົ່ວໄດ້;

18 ແລະ ຈົ່ງຖືໝວກເຫລັກແຫ່ງຄວາມລອດ, ແລະ ດາບຂອງພຣະວິນຍານຂອງເຮົາ, ຊຶ່ງເຮົາຈະຖອກເຫລົງເທິງເຈົ້າ, ແລະ ຖ້ອຍຄຳຂອງເຮົາ ຊຶ່ງເຮົາໄດ້ເປີດເຜີຍໃຫ້ແກ່ເຈົ້າ, ແລະ ເຫັນພ້ອມນຳກັນໃນສິ່ງໃດກໍຕາມທີ່ເຈົ້າໄດ້ຖາມເຮົາ, ແລະ ຈົ່ງຊື່ສັດຈົນກວ່າເຮົາຈະມາ, ແລະ ເຈົ້າຈະຖືກ [ກ]ພາຂຶ້ນໄປ, ເພື່ອວ່າບ່ອນໃດທີ່ເຮົາຢູ່ ເຈົ້າກໍຈະຢູ່ບ່ອນນັ້ນ [ຂ]ຄືກັນ. ອາແມນ.

## ພາກທີ 28

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ອໍລີເວີ ຄາວເດີຣີ, ທີ່*

11 *ກ* ຄມພ ອາດາມ.
12 *ກ* ຈສ—ປ 1:72.
ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
*ຂ* ຄມພ ອັກຄະສາວົກ.
*ຄ* ກຈກ 1:8.
13 *ກ* ມທ 16:19.
*ຂ* ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຄ* ຄມພ ຍຸກສະໄໝ.
*ງ* ຄມພ ພຣະກິດຕິຄຸນ.
*ຈ* ຢຄ 5:71;
ຄພ 43:28–30.
*ສ* ອຟຊ 1:9–10;
ຄພ 112:30; 124:41.
*ຊ* ຄພ 84:100.
14 *ກ* ຢຮ 6:37; 17:9, 11;
3 ນຟ 15:24;
ຄພ 50:41–42; 84:63.
15 *ກ* ຣມ 13:12;
ອຟຊ 6:11–18.
*ຂ* ມລກ 3:2; ຄພ 87:8.
16 *ກ* ອຊຢ 11:5.
*ຂ* ຄມພ ຈິງ, ຄວາມຈິງ.
*ຄ* ອຊຢ 59:17.
*ງ* ຄມພ ຊອບທຳ, ຄວາມຊອບທຳ.
*ຈ* 2 ນຟ 19:6.
*ສ* ຄພ 128:19–21.
17 *ກ* 1 ນຟ 15:24;
ຄພ 3:8.
18 *ກ* 1 ນຟ 13:37; ຄພ 17:8.
*ຂ* ຢຮ 14:3.

*ເມືອງເຟແອດ, ລັດນິວຢອກ, ເດືອນກັນຍາ 1830. ໄຮຣໍາ ເພຈ໌, ສະມາຊິກຂອງສາດສະໜາຈັກ, ມີຫີນກ້ອນໜຶ່ງ ແລະ ອ້າງວ່າໄດ້ຮັບການເປີດເຜີຍດ້ວຍຄວາມຊ່ວຍເຫລືອຈາກກ້ອນຫີນກ່ຽວກັບການເສີມສ້າງຂອງຊີໂອນ ແລະ ລະບຽບຂອງສາດສະໜາຈັກ. ສະມາຊິກຫລາຍຄົນໄດ້ຖືກຫລອກເພາະການກ່າວອ້າງນັ້ນ, ແລະ ແມ່ນແຕ່ອໍລີເວີ ຄາວເດີຣີ ກໍຖືກຫລອກຄືກັນ. ບໍ່ດົນກ່ອນກອງປະຊຸມໃຫຍ່ເທື່ອໜຶ່ງທີ່ກໍານົດໄວ້, ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າຢ່າງຈິງຈັງກ່ຽວກັບເລື່ອງນີ້, ແລະ ໄດ້ຮັບການເປີດເຜີຍຕໍ່ໄປນີ້.*

*1–7, ໂຈເຊັບ ສະມິດ ຖືຂໍກະແຈ ແຫ່ງຄວາມລຶກລັບ, ແລະ ເພິ່ນຄົນດຽວເທົ່ານັ້ນທີ່ໄດ້ຮັບການເປີດເຜີຍສຳລັບສາດສະໜາຈັກ; 8–10, ອໍລີເວີ ຄາວເດີຣີ ຕ້ອງໄປສັ່ງສອນຊາວເລມັນ; 11–16, ຊາຕານໄດ້ຫລອກລວງໄຮຣໍາ ເພຈ໌ ແລະ ມອບການເປີດເຜີຍເທັດໃຫ້ລາວ.*

1 ຈົ່ງ ເບິ່ງ, ເຮົາກ່າວກັບເຈົ້າ, [ກ]ອໍລີເວີ, ວ່າມັນຈະຖືກມອບໃຫ້ແກ່ເຈົ້າ ເພື່ອສາດສະໜາຈັກຈະໄດ້ຍິນເຈົ້າ ໃນທຸກສິ່ງ ບໍ່ວ່າສິ່ງໃດກໍຕາມທີ່ເຈົ້າຈະ [ຂ]ສິດສອນເຂົາໂດຍ [ຄ]ພຣະຜູ້ປອບໂຍນ, ກ່ຽວກັບການເປີດເຜີຍ ແລະ ບັນຍັດ ຊຶ່ງເຮົາໄດ້ປະທານໃຫ້.

2 ແຕ່, ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, [ກ]ບໍ່ມີຄົນໃດໄດ້ຮັບການແຕ່ງຕັ້ງໃຫ້ຮັບບັນຍັດ ແລະ ການເປີດເຜີຍໃນສາດສະໜາຈັກນີ້ ຍົກເວັ້ນແຕ່ຜູ້ຮັບໃຊ້ຂອງເຮົາ [ຂ]ໂຈເຊັບ ສະມິດ, ຜູ້ລູກ, ເພາະລາວໄດ້ຮັບມັນເໝືອນດັ່ງໂມເຊ.

3 ແລະ ເຈົ້າຈົ່ງເຊື່ອຟັງສິ່ງທີ່ເຮົາຈະປະທານໃຫ້ແກ່ລາວ, ແມ່ນແຕ່ເໝືອນດັ່ງ [ກ]ອາໂຣນ, ເພື່ອປະກາດບັນຍັດ ແລະ ການເປີດເຜີຍດ້ວຍຄວາມຊື່ສັດ, ດ້ວຍອຳນາດ ແລະ [ຂ]ສິດອຳນາດຕໍ່ສາດສະໜາຈັກ.

4 ແລະ ຖ້າຫາກເຈົ້າຖືກນຳພາໂດຍພຣະຜູ້ປອບໂຍນໃຫ້ [ກ]ກ່າວ ຫລື ສິດສອນ, ຫລືໃນຕະຫລອດເວລາໂດຍທາງບັນຍັດຕໍ່ສາດສະໜາຈັກ, ເຈົ້າສາມາດເຮັດໄດ້.

5 ແຕ່ເຈົ້າຈະບໍ່ຂຽນເປັນແບບບັນຍັດ, ຍົກເວັ້ນແຕ່ໂດຍຄວາມສະຫລຽວສະຫລາດເທົ່ານັ້ນ;

6 ແລະ ເຈົ້າຈະບໍ່ບັນຊາຜູ້ເປັນຫົວໜ້າຂອງເຈົ້າ, ແລະ ເປັນຫົວໜ້າຂອງສາດສະໜາຈັກ;

7 ເພາະ ເຮົາ ໄດ້ ມອບ [ກ]ຂໍ ກະແຈ ແຫ່ງ [ຂ]ຄວາມລຶກລັບ, ແລະ ການເປີດເຜີຍຊຶ່ງຜະນຶກໄວ້ແລ້ວໃຫ້ແກ່ລາວ, ຈົນກວ່າເຮົາຈະກຳນົດຄົນອື່ນໃຫ້ເຮັດແທນລາວ.

8 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ເຈົ້າຈະໄປຫາ [ກ]ຊາວເລມັນ ແລະ ສັ່ງສອນ [ຂ]ພຣະກິດຕິຄຸນຂອງເຮົາໃຫ້ແກ່ພວກເຂົາ; ແລະ ຕາບໃດທີ່ພວກເຂົາໄດ້ຮັບຄຳສອນຂອງເຈົ້າ, ເຈົ້າຈົ່ງເຮັດໃຫ້ສາດສະໜາຈັກຂອງເຮົາຖືກສະຖາປະນາຂຶ້ນໃນບັນດາພວກເຂົາ; ແລະ ເຈົ້າຈະໄດ້ຮັບການ

**28** 1 *ກ* ຄພ 20:3.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ—ການສອນດ້ວຍພຣະວິນຍານ.
*ຄ* ຄມພ ພຣະຜູ້ປອບໂຍນ.
2 *ກ* ຄພ 35:17–18; 43:4.
*ຂ* 2 ນຟ 3:14–20.
ຄມພ ສະມິດ, ໂຈເຊັບ, ຜູ້ລູກ.
3 *ກ* ຄມພ ອາໂຣນ, ອ້າຍຂອງໂມເຊ.
*ຂ* ຄມພ ສິດອຳນາດ.
4 *ກ* ອພຍ 4:12–16; ຄພ 24:5–6.
7 *ກ* ຄພ 64:5; 84:19.
*ຂ* ຄມພ ຄວາມລຶກລັບຂອງພຣະເຈົ້າ.
8 *ກ* 2 ນຟ 3:18–22; ຄພ 30:5–6; 32:1–3.
*ຂ* ຄພ 3:19–20.

ເປີດເຜີຍ, ແຕ່ບໍ່ໃຫ້ຂຽນມັນໄວ້ເປັນແບບບັບຍັດ.

9 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ມັນບໍ່ໄດ້ເປີດເຜີຍ, ແລະ ບໍ່ມີຄົນໃດຮູ້ຈັກ ບ່ອນ ທີ່ [ກ]ເມືອງ [ຂ]ຊີໂອນ ຈະ ຖືກ ສ້າງຂຶ້ນ, ແຕ່ຈະມອບໃຫ້ຫລັງຈາກນີ້. ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ມັນຈະຢູ່ຊາຍແດນໃກ້ຊາວເລມັນ.

10 ເຈົ້າ ຈະ ບໍ່ ໄປ ຈາກ ບ່ອນ ນີ້ ຈົນ ກວ່າກອງປະຊຸມໃຫຍ່ສິ້ນສຸດລົງ; ແລະ ຜູ້ຮັບໃຊ້ຂອງເຮົາ ໂຈເຊັບໄດ້ຮັບການແຕ່ງຕັ້ງໃຫ້ຄວບຄຸມກອງປະຊຸມໃຫຍ່ໂດຍສຽງໃນທີ່ປະຊຸມ, ແລະ ສິ່ງໃດທີ່ລາວໄດ້ກ່າວກັບເຈົ້າ ໃຫ້ເຈົ້າບອກສິ່ງນັ້ນ.

11 ແລະ ອີກເທື່ອໜຶ່ງ, ໃຫ້ເຈົ້າພາອ້າຍນ້ອງຂອງເຈົ້າ, ໄຮຣຳ ເພຈ໌, ອອກໄປຕາມລຳພັງ [ກ]ລະຫວ່າງເຈົ້າກັບລາວເທົ່ານັ້ນ, ແລະ ໃຫ້ບອກລາວວ່າສິ່ງທີ່ລາວໄດ້ຂຽນໄວ້ຈາກຫີນກ້ອນນັ້ນ ບໍ່ໄດ້ມາຈາກເຮົາ ແລະ ວ່າ [ຂ]ຊາຕານໄດ້ [ຄ]ຫລອກລວງລາວ;

12 ເພາະ, ຈົ່ງເບິ່ງ, ສິ່ງເຫລົ່ານີ້ບໍ່ໄດ້ຖືກກຳນົດໃຫ້ແກ່ລາວ, ທັງຈະບໍ່ກຳນົດສິ່ງໃດໃຫ້ຄົນໃດໃນສາດສະໜາຈັກນີ້ທີ່ກົງກັນຂ້າມກັບພັນທະສັນຍາຂອງສາດສະໜາຈັກ.

13 ເພາະທຸກສິ່ງຈະຕ້ອງຖືກເຮັດໄປຕາມລະບຽບ, ແລະ ໂດຍ [ກ]ການເຫັນຊອບດ້ວຍກັນໃນສາດສະໜາຈັກ, ໂດຍ ການອະທິຖານດ້ວຍສັດທາ.

14 ແລະ ເຈົ້າ ຈະ ຊ່ວຍ ແກ້ ໄຂ ທຸກ ສິ່ງເຫລົ່ານີ້, ຕາມພັນທະສັນຍາຂອງສາດສະໜາຈັກ, ກ່ອນເຈົ້າຈະເດີນທາງໄປໃນບັນດາຊາວເລມັນ.

15 ແລະ ມັນຈະ [ກ]ຖືກມອບໃຫ້ແກ່ເຈົ້າຈາກເວລາທີ່ເຈົ້າຈະໄປ, ຈົນເຖິງເວລາທີ່ເຈົ້າຈະກັບຄືນ, ວ່າເຈົ້າຈະເຮັດສິ່ງໃດ.

16 ແລະ ເຈົ້າຕ້ອງເປີດປາກຂອງເຈົ້າໃນທຸກເວລາ, ປະກາດພຣະກິດຕິຄຸນຂອງເຮົາດ້ວຍສຽງທີ່ມີຄວາມປິຕິຍິນດີ. ອາແມນ.

# ພາກທີ 29

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ຕໍ່ໜ້າແອວເດີຫົກຄົນ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນກັນຍາ 1830. ການເປີດເຜີຍນີ້ໄດ້ຖືກມອບໃຫ້ບໍ່ດົນກ່ອນກອງປະຊຸມໃຫຍ່, ເລີ່ມຈາກວັນທີ 26 ເດືອນກັນຍາ, 1830.*

*1–8, ພຣະຄຣິດເຕົ້າໂຮມຜູ້ທີ່ຖືກເລືອກໄວ້ຂອງພຣະອົງ; 9–11, ການສະເດັດມາຂອງພຣະອົງເຮັດໃຫ້ຊ່ວງໄລຍະພັນປີເລີ່ມຕົ້ນ; 12–13, ອັກຄະສາວົກສິບສອງຈະພິພາກສາອິດສະຣາເອນທັງໝົດ; 14–21, ເຄື່ອງໝາຍ, ໂຣກພະຍາດ, ແລະ ຄວາມເປົ່າປ່ຽວ ຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງ; 22–28, ການຟື້ນຄືນຊີວິດ ແລະ ການພິພາກສາຄັ້ງສຸດທ້າຍຫລັງຈາກພັນປີ; 29–35, ທຸກສິ່ງເປັນເລື່ອງທາງວິນຍານ*

9 *ກ* ຄພ 57:1–3.
*ຂ* ຄພ 52:42–43.
ຄມພ ຊີໂອນ.

11 *ກ* ມທ 18:15.
*ຂ* ພນມ 20:10.
*ຄ* ຄພ 43:5–7.

13 *ກ* ຄມພ ເຫັນຊອບນຳກັນ.
15 *ກ* 2 ນຟ 32:3, 5.

*ຕໍ່ພຣະຜູ້ເປັນເຈົ້າ; 36–39, ມານ ແລະ ບໍລິວານຂອງມັນຖືກຂັບໄລ່ອອກຈາກສະຫວັນ ເພື່ອ ໃຫ້ມາລໍ້ລວງມະນຸດ; 40–45, ການຕົກ ແລະ ການຊົດໃຊ້ນຳຄວາມລອດມາໃຫ້; 46–50, ເດັກນ້ອຍໆໄດ້ຮັບການໄຖ່ຜ່ານການຊົດໃຊ້.*

1 ຈົ່ງຟັງສຸລະສຽງຂອງພຣະເຢຊູຄຣິດ, ພຣະຜູ້ໄຖ່ຂອງພວກເຈົ້າ, [ກ]ເຮົາເປັນຜູ້ຍິ່ງໃຫຍ່, ຜູ້ທີ່ແຂນແຫ່ງ [ຂ]ຄວາມເມດຕາ ໄດ້ [ຄ]ຊົດໃຊ້ເພື່ອບາບຂອງພວກເຈົ້າ;

2 ຜູ້ທີ່ຈະ [ກ]ເຕົ້າໂຮມຜູ້ຄົນຂອງພຣະອົງດັ່ງແມ່ໄກ່ເຕົ້າໂຮມລູກຂອງມັນໄວ້ໃຕ້ປີກຂອງມັນ, ແມ່ນແຕ່ຫລາຍຕໍ່ຫລາຍຄົນຈະໄດ້ຍິນສຽງຂອງເຮົາ ແລະ [ຂ]ຖ່ອມຕົວລົງຢູ່ຕໍ່ໜ້າເຮົາ, ແລະ ເອີ້ນຫາເຮົາໃນຄຳອະທິຖານອັນມີພະລັງ.

3 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບພວກເຈົ້າ, ວ່າໃນເວລານີ້ບາບຂອງພວກເຈົ້າໄດ້ຖືກ [ກ]ອະໄພໃຫ້ແລ້ວ, ສະນັ້ນ ພວກເຈົ້າຈຶ່ງຈະໄດ້ຮັບສິ່ງເຫລົ່ານີ້; ແຕ່ຈົ່ງຈື່ຈຳບໍ່ໃຫ້ເຮັດບາບອີກຕໍ່ໄປ, ຖ້າບໍ່ດັ່ງນັ້ນໄພອັນຕະລາຍຈະມາຫາພວກເຈົ້າ.

4 ຕາມຄວາມຈິງ, ເຮົາກ່າວກັບພວກເຈົ້າວ່າ ພວກເຈົ້າໄດ້ຖືກເລືອກອອກຈາກໂລກເພື່ອປະກາດພຣະກິດຕິຄຸນຂອງເຮົາດ້ວຍ [ກ]ສຽງທີ່ມີຄວາມປິຕິຍິນດີ, ຄືກັບວ່າສຽງແກ.

5 ຈົ່ງລື້ນເລີງ ແລະ ເບີກບານເຖີດ, ເພາະເຮົາຢູ່ໃນ [ກ]ທ່າມກາງພວກເຈົ້າ, ແລະ ເຮົາເປັນ [ຂ]ຜູ້ວິງວອນແທນພວກເຈົ້ານຳພຣະບິດາ; ແລະ ມັນເປັນເຈດຕະນາດີຂອງພຣະອົງທີ່ຈະມອບ [ຄ]ອານາຈັກໃຫ້ພວກເຈົ້າ.

6 ແລະ, ດັ່ງທີ່ມີຂຽນໄວ້—ສິ່ງໃດກໍຕາມທີ່ພວກເຈົ້າຈະ [ກ]ທູນຂໍດ້ວຍ [ຂ]ສັດທາ, ໂດຍການ [ຄ]ຮ່ວມກັນໃນຄຳອະທິຖານຕາມຄຳບັນຊາຂອງເຮົາ, ແລ້ວພວກເຈົ້າຈະໄດ້ຮັບ.

7 ແລະ ພວກເຈົ້າໄດ້ຮັບການເອີ້ນເພື່ອເຮັດໃຫ້ [ກ]ການເຕົ້າໂຮມ [ຂ]ຜູ້ທີ່ຖືກເລືອກໄວ້ຂອງເຮົາເກີດຂຶ້ນ; ເພາະຜູ້ທີ່ຖືກເລືອກໄວ້ຂອງເຮົາ [ຄ]ໄດ້ຍິນສຽງຂອງເຮົາ ແລະ ບໍ່ເຮັດ [ງ]ໃຈແຂງກະດ້າງ;

8 ດັ່ງນັ້ນ ຈຶ່ງມີຄຳສັ່ງອອກໄປຈາກພຣະບິດາວ່າ ພວກເຂົາຈະຖືກ [ກ]ເຕົ້າໂຮມໄວ້ຢູ່ບ່ອນໜຶ່ງໃນພື້ນແຜ່ນດິນນີ້, ເພື່ອ [ຂ]ຕຽມໃຈຂອງພວກເຂົາ ແລະ ໃຫ້ຕຽມໃນທຸກສິ່ງໄວ້ເພື່ອຮັບວັນທີ່ [ຄ]ຄວາມທຸກຍາກລຳບາກ ແລະ ຄວາມເປົ່າປ່ຽວດຽວດາຍຈະຖືກສົ່ງມາຫາຄົນຊົ່ວ.

9 ເພາະຊົ່ວໂມງໃກ້ຈະມາເຖິງແລ້ວ ແລະ ວັນຈະມາເຖິງໃນບໍ່ຊ້ານີ້ ເມື່ອແຜ່ນດິນ

**29** 1*ກ* ຄມພ ເຮົາເປັນ.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
*ຄ* ຄມພ ຊົດໃຊ້, ການຊົດໃຊ້.
2*ກ* ມທ 23:37; 3 ນຟ 10:4–6.
*ຂ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
3*ກ* ຄມພ ອະໄພ, ໃຫ້ອະໄພ.
4*ກ* ແອວ 29:1–2; ຄພ 19:37; 30:9.
5*ກ* ມທ 18:20; ຄພ 6:32; 38:7; 88:62–63.
*ຂ* ຄມພ ວິງວອນແທນ, ຜູ້ວິງວອນແທນ.
*ຄ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
6*ກ* ມທ 21:22; ຢຣ 14:13.
*ຂ* ມຣກ 11:24.
*ຄ* 3 ນຟ 27:1–2; ຄພ 84:1.
7*ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* ມຣກ 13:20; ຄພ 84:34. ຄມພ ຖືກເລືອກ.
*ຄ* ແອວ 5:37–41.
*ງ* ຄມພ ໃຈ.
8*ກ* ຄພ 45:64–66; 57:1.
*ຂ* ຄພ 58:6–9; 78:7.
*ຄ* ຄພ 5:19; 43:17–27.

ໂລກ ຈະ ສຸກ ງອມ; ແລະ ທຸກ [ກ]ຄົນທີ່ອວດ
ດີ ແລະ ຄົນທີ່ເຮັດຄວາມຊົ່ວຮ້າຍ ຈະເປັນ
ຄືກັນກັບ [ຂ]ເຟືອງເຂົ້າ; ແລະ ເຮົາຈະ [ຄ]ເຜົາ
ມັນ, ຈອມ ໂຍທາ ໄດ້ກ່າວ, ເພື່ອວ່າຄວາມ
ຊົ່ວຮ້າຍຈະບໍ່ມີຢູ່ເທິງແຜ່ນດິນໂລກ;
10 ເພາະ ຊົ່ວ ໂມງ ໃກ້ ຈະ ມາ ເຖິງ ແລ້ວ,
ແລະ ເລື່ອງ ຊຶ່ງ [ກ]ກ່າວ ໄວ້ ໂດຍ ອັກຄະ
ສາວົກຂອງເຮົາຕ້ອງເກີດເປັນຈິງ; ເພາະ
ພວກເຂົາໄດ້ກ່າວໄວ້ຢ່າງໃດ ມັນກໍຈະເກີດ
ຂຶ້ນຢ່າງນັ້ນ;
11 ເພາະ ເຮົາ ຈະ ເປີດ ເຜີຍ ຕົວ ເຮົາ ຈາກ
ສະຫວັນ ດ້ວຍ ອຳນາດ ແລະ ລັດສະໝີ
ພາບ ອັນຍິ່ງໃຫຍ່, ພ້ອມດ້ວຍ [ກ]ໄພ່ພົນທັງ
ປວງ ໃນ ນັ້ນ, ແລະ ດຳ ລົງຢູ່ ໃນ [ຂ]ຄວາມ
ຊອບ ທຳ ກັບ ມະນຸດ ຢູ່ ເທິງ ແຜ່ນ ດິນ ໂລກ
ເປັນເວລາ [ຄ]ພັນປີ, ແລະ ຄົນຊົ່ວຈະບໍ່ຄົງຢູ່.
12 ແລະ ອີກເທື່ອໜຶ່ງ, ຕາມຈິງ, ຕາມຈິງ
ແລ້ວ, ເຮົາກ່າວກັບ ພວກເຈົ້າ, ແລະ ມັນ
ໄດ້ອອກໄປແລ້ວ ໃນຄຳສັ່ງທີ່ຈິງຈັງ, ຕາມ
ພຣະປະສົງຂອງພຣະບິດາ, ວ່າ [ກ]ອັກຄະ
ສາວົກຂອງເຮົາ, ອັກຄະສາວົກສິບສອງຄົນ
ຜູ້ຊຶ່ງໄດ້ຢູ່ນຳເຮົາໃນການປະຕິບັດສາດສະ
ໜາກິດຂອງເຮົາທີ່ເຢຣູຊາເລັມ, ຈະຢືນຢູ່
ທາງເບື້ອງຂວາມືຂອງເຮົາໃນວັນທີ່ເຮົາມາ
ໃນ [ຂ]ເລົາໄຟ, ນຸ່ງຫົ່ມດ້ວຍເສື້ອຄຸມແຫ່ງ
ຄວາມຊອບທຳ, ດ້ວຍມົງກຸດຢູ່ເທິງຫົວ
ຂອງເຂົາເຈົ້າ, ໃນ [ຄ]ລັດສະໝີພາບ ແມ່ນ
ແຕ່ເໝືອນດັ່ງທີ່ເຮົາເປັນ, ເພື່ອ [ງ]ພິພາກສາ
ເຊື້ອສາຍອິດສະຣາເອນທັງໝົດ, ແມ່ນແຕ່
ຫລາຍຕໍ່ຫລາຍຄົນທີ່ຮັກເຮົາ ແລະ ຮັກສາ
ບັນຍັດຂອງເຮົາ, ແລະ ບໍ່ມີຄົນອື່ນອີກ.
13 ເພາະ [ກ]ແກຈະສົ່ງສຽງອັນຍາວນານ
ແລະ ດັງກ້ອງ, ແມ່ນແຕ່ເໝືອນດັ່ງກັບຢູ່
ເທິງພູຊີນາຍ, ແລະ ທັງແຜ່ນດິນໂລກ ຈະ
ສັ່ນສະເທືອນ, ແລະ ພວກເຂົາຈະ [ຂ]ອອກ
ມາ—ແທ້ຈິງແລ້ວ, ແມ່ນແຕ່ [ຄ]ຄົນຕາຍ ຊຶ່ງ
ໄດ້ຕາຍໃນເຮົາ, ເພື່ອມາຮັບເອົາ [ງ]ມົງກຸດ
ແຫ່ງຄວາມຊອບທຳ, ແລະ ນຸ່ງຫົ່ມ, [ຈ]ແມ່ນ
ແຕ່ເໝືອນດັ່ງເຮົາ, ເພື່ອຢູ່ນຳເຮົາ, ເພື່ອວ່າ
ພວກເຮົາຈະໄດ້ເປັນອັນໜຶ່ງດຽວກັນ.
14 ແຕ່, ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າ
ວ່າ ກ່ອນ [ກ]ວັນອັນຍິ່ງໃຫຍ່ນີ້ຈະມາເຖິງ
[ຂ]ດວງຕາເວັນຈະມືດດັບ, ແລະ ດວງເດືອນ
ຈະກັບເປັນເລືອດ, ແລະ ດວງດາວຈະຕົກ
ລົງມາຈາກຟ້າສະຫວັນ, ແລະ ຈະມີ [ຄ]ເຄື່ອງ
ໝາຍ ອັນ ຍິ່ງ ໃຫຍ່ ໃນ ຟ້າ ສະຫວັນ ເບື້ອງ
ເທິງ ແລະ ໃນແຜ່ນດິນໂລກເບື້ອງລຸ່ມ;
15 ແລະ ຈະມີການຮ້ອງໄຫ້ ແລະ [ກ]ການ

---

9 ກ 2 ນຟ 20:33; 3 ນຟ 25:1. ຄມພ ຈອງຫອງ, ຄວາມຈອງຫອງ.
ຂ ນຣ 1:10; ມລກ 4:1; 1 ນຟ 22:15, 23; ຈສ—ປ 1:37.
ຄ ຄພ 45:57; 63:34, 54; 64:24; 88:94; 101:23–25; 133:64. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
10 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
11 ກ ຈສ—ມ 1:37.
ຂ ຄມພ ຊອບທຳ, ຄວາມຊອບທຳ.
ຄ ຄມພ ພຣະເຢຊູຄຣິດ—ການປົກຄອງຂອງພຣະຄຣິດໃນລະຫວ່າງພັນປີ; ພັນປີ.
12 ກ ຄມພ ອັກຄະສາວົກ.
ຂ ອຊຢ 66:15–16; ຄພ 130:7; 133:41.
ຄ ຄມພ ພຣະເຢຊູຄຣິດ—ລັດສະໝີພາບຂອງພຣະເຢຊູຄຣິດ; ລັດສະໝີພາບ.
ງ ມທ 19:28; ລກ 22:30; 1 ນຟ 12:9; ມມ 3:18–19.
13 ກ ຄພ 43:18; 45:45.
ຂ ຄພ 76:50.
ຄ ຄພ 88:97; 133:56.
ງ ຄມພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
ຈ ຄພ 76:94–95; 84:35–39.
14 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຂ ຢອ 2:10; ຈສ—ມ 1:33.
ຄ ຄມພ ເຄື່ອງໝາຍແຫ່ງການເວລາ.
15 ກ ມທ 13:42.

ຄວນຄາງໃນທ່າມກາງໄພ່ພົນມະນຸດ;
16 ແລະ [ກ]ພະຍຸໝາກເຫັບໃຫຍ່ອັນຮ້າຍ
ແຮງຈະຖືກສົ່ງໄປທຳລາຍຜົນລະປູກຂອງ
ແຜ່ນດິນໂລກ.
17 ແລະ ເຫດ ການ ຈະ ບັງ ເກີດ ຂຶ້ນ ຄື
ເພາະ ຄວາມ ຊົ່ວ ຮ້າຍ ຂອງ ໂລກ, ຄື ເຮົາ
ຈະ [ກ]ແກ້ ແຄ້ນ [ຂ]ຄົນຊົ່ວ, ເພາະເຂົາຈະບໍ່
ກັບໃຈ; ເພາະຈອກແຫ່ງຄວາມເຄືອງແຄ້ນ
ຂອງເຮົາເຕັມປ່ຽມ; ເພາະຈົ່ງເບິ່ງ, [ຄ]ເລືອດ
ຂອງເຮົາຈະບໍ່ຊຳລະເຂົາ ຖ້າຫາກເຂົາບໍ່
ຟັງເຮົາ.
18 ດັ່ງນັ້ນ, ເຮົາອົງພຣະຜູ້ເປັນເຈົ້າ ຈະ
ສົ່ງ ຮີ້ນ ມາ ເທິງ ຜືນ ແຜ່ນດິນ ໂລກ, ຊຶ່ງ ຈະ
ຈັບຜູ້ອາໄສຢູ່ໃນນັ້ນ, ແລະ ຈະກິນເນື້ອໜັງ
ຂອງເຂົາ, ແລະ ຈະເຮັດໃຫ້ໂຕໜອນເກີດ
ກັບເຂົາ;
19 ແລະ ລີ້ນ ຂອງ ເຂົາ ຈະ ຖືກ ຫ້າມ ໄວ້
ເພື່ອເຂົາຈະບໍ່ [ກ]ເອີ່ຍປາກຕໍ່ຕ້ານເຮົາ; ແລະ
ເນື້ອ ໜັງ ຂອງ ເຂົາ ຈະ ຫລຸດ ຈາກ ກະດູກ
ຂອງເຂົາ, ແລະ ໜ່ວຍ ຕາ ຂອງ ເຂົາ ຈາກ
ເບົ້າຂອງມັນ;
20 ແລະ ເຫດການຈະບັງເກີດຂຶ້ນຄື [ກ]ສັດ
ໃນປ່າ ແລະ ຝູງນົກໃນອາກາດຈະກັດກິນ
ເຂົາຈົນໝົດສິ້ນ.
21 ແລະ ສາດ ສະ ໜາ ຈັກ ໃຫຍ່ ແລະ
[ກ]ໜ້າກຽດຊັງ, ຊຶ່ງເປັນ [ຂ]ໂສເພນີຂອງແຜ່ນ
ດິນໂລກທັງໝົດ, ຈະຖືກໂຄ່ນລົງ [ຄ]ດ້ວຍໄຟ
ເຜົາຜານ, ຕາມທີ່ມັນຖືກກ່າວໄວ້ໂດຍປາກ
ຂອງເອເຊກຽນ ຜູ້ເປັນສາດສະດາ, ຜູ້ໄດ້
ກ່າວເຖິງສິ່ງເຫລົ່ານີ້, ຊຶ່ງຍັງບໍ່ໄດ້ເກີດຂຶ້ນ
ເທື່ອ ແຕ່ [ງ]ຕ້ອງເກີດຂຶ້ນຢ່າງແນ່ນອນ, ດັ່ງ
ທີ່ເຮົາມີຊີວິດຢູ່, ເພາະຄວາມໜ້າກຽດຊັງ
ຈະຄອບຄອງບໍ່ໄດ້.
22 ແລະ ອີກເທື່ອໜຶ່ງ, ຕາມຈິງ, ຕາມຈິງ
ແລ້ວ, ເຮົາກ່າວກັບພວກເຈົ້າວ່າ ເມື່ອ [ກ]ພັນ
ປີຜ່ານພົ້ນໄປ, ແລະ ມະນຸດເລີ່ມຕົ້ນປະຕິ
ເສດພຣະເຈົ້າຂອງເຂົາອີກ, ຈາກນັ້ນ ເຮົາ
ຈະລະເວັ້ນແຜ່ນດິນໂລກໄວ້ [ຂ]ຊົ່ວໄລຍະ
ໜຶ່ງ;
23 ແລະ [ກ]ທີ່ສຸດ ຈະ ມາ ເຖິງ, ແລະ ຟ້າ
ສະຫວັນກັບແຜ່ນດິນໂລກຈະຖືກເຜົາຜານ
ແລະ [ຂ]ລ່ວງພົ້ນໄປ, ແລະ ຈະມີຟ້າສະຫວັນ
ໃໝ່ ແລະ [ຄ]ແຜ່ນດິນໂລກໃໝ່.
24 ເພາະສິ່ງເກົ່າຈະ [ກ]ລ່ວງພົ້ນໄປ, ແລະ
ທຸກ ສິ່ງ ຈະ ກັບ ເປັນ ສິ່ງ ໃໝ່, ແມ່ນ ແຕ່ ຟ້າ
ສະຫວັນ ແລະ ແຜ່ນດິນໂລກ, ແລະ ຄວາມ
ສົມບູນທັງໝົດໃນນັ້ນ, ທັງມະນຸດ ແລະ ສັດ
ສາວາສິ່ງ, ນົກໃນອາກາດ, ແລະ ປາໃນ
ທະເລ;
25 ແລະ ແມ່ນແຕ່ [ກ]ຜົມເສັ້ນໜຶ່ງ, ທັງຝຸ່ນ
ດິນເມັດໜຶ່ງກໍຈະບໍ່ເສຍໄປ, ເພາະມັນເປັນ
ຝີມືຂອງເຮົາ.

---

16 *ກ* ອຊກ 38:22; ພນມ 11:19; 16:21.
17 *ກ* ພນມ 16:7–11; 2 ນຟ 30:10; ຈສ—ມ 1:53–55. ຄມພ ແກ້ແຄ້ນ, ການແກ້ແຄ້ນ.
*ຂ* ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
*ຄ* 1 ຢຮ 1:7; ແອວ 11:40–41; ຄພ 19:16–18.
19 *ກ* ຊກຍ 14:12.
20 *ກ* ອຊຢ 18:6; ອຊກ 39:17; ພນມ 19:17–18.
21 *ກ* ຄມພ ມານ—ສາດສະໜາຈັກຂອງມານ.
*ຂ* ພນມ 19:2.
*ຄ* ຢອ 1:19–20; 2:3; ຄພ 97:25–26. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
*ງ* ຄພ 1:38.
22 *ກ* ຄມພ ພັນປີ.
*ຂ* ພນມ 20:3; ຄພ 43:30–31; 88:110–111.
23 *ກ* ມທ 24:14. ຄມພ ໂລກ—ທີ່ສຸດຂອງໂລກ.
*ຂ* ມທ 24:35; ຈສ—ມ 1:35.
*ຄ* ຄມພ ແຜ່ນດິນໂລກ—ພາວະສຸດທ້າຍຂອງແຜ່ນດິນໂລກ.
24 *ກ* ພນມ 21:1–4.
25 *ກ* ແອວ 40:23.

26 ແຕ່, ຈົ່ງ ເບິ່ງ, ຕາມ ຄວາມ ຈິງ ເຮົາ
ກ່າວກັບພວກເຈົ້າວ່າ ກ່ອນແຜ່ນດິນໂລກ
ຈະຜ່ານໄປ, [ກ]ມີຄາເອນ, [ຂ]ທູດຂອງເຮົາ,
ຈະເປົ່າ [ຄ]ແກຂອງລາວ, ແລະ ຈາກນັ້ນ
ຄົນຕາຍທຸກຄົນຈະ [ງ]ລຸກຂຶ້ນ, ເພາະຫລຸມ
ສົບຂອງເຂົາຈະເປີດອອກ, ແລະ ເຂົາຈະ
[ຈ]ອອກມາ—ແທ້ຈິງແລ້ວ, ແມ່ນແຕ່ທຸກຄົນ.
27 ແລະ [ກ]ຄົນຊອບທຳຈະຖືກເຕົ້າໂຮມ
ໄວ້ຢູ່ທາງເບື້ອງ [ຂ]ຂວາມືຂອງເຮົາໄປສູ່ຊີ
ວິດນິລັນດອນ; ແລະ ຄົນຊົ່ວທາງຊ້າຍມື
ຂອງເຮົາ ຊຶ່ງເຮົາຈະອັບອາຍທີ່ຈະຮັບເປັນ
ຂອງເຮົາຢູ່ຕໍ່ພຣະພັກຂອງພຣະບິດາ;
28 ດັ່ງນັ້ນ ເຮົາຈະກ່າວກັບເຂົາ—ຈົ່ງ
[ກ]ອອກໄປຈາກເຮົາ, ເຈົ້າຜູ້ຖືກສາບແຊ່ງ,
ໄປຫາ [ຂ]ໄຟອັນເປັນນິດ, ທີ່ຕຽມໄວ້ສຳລັບ
[ຄ]ມານ ແລະ ບໍລິວານຂອງມັນ.
29 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບ
ພວກເຈົ້າວ່າ ບໍ່ເຄີຍມີເວລາໃດທີ່ເຮົາໄດ້
ປະກາດຈາກປາກຂອງເຮົາເອງວ່າເຂົາຈະ
ກັບມາ, ເພາະ [ກ]ບ່ອນທີ່ເຮົາຢູ່ ເຂົາມາຫາບໍ່
ໄດ້, ເພາະເຂົາບໍ່ມີອຳນາດ.
30 ແຕ່ຈົ່ງຈຳໄວ້ວ່າ ການພິພາກສາທັງ
ໝົດຂອງເຮົາບໍ່ໄດ້ຖືກມອບໃຫ້ແກ່ມະນຸດ;
ແລະ ດັ່ງທີ່ຖ້ອຍຄຳຂອງເຮົາໄດ້ອອກໄປ
ຈາກປາກຂອງເຮົາສັນໃດ ມັນຈະບັນລຸຜົນ
ສຳເລັດສັນນັ້ນ, ວ່າ [ກ]ທຳອິດຈະເປັນສຸດ
ທ້າຍ, ແລະ ວ່າສຸດທ້າຍຈະເປັນທຳອິດ
ໃນທຸກສິ່ງ ອັນໃດກໍຕາມທີ່ເຮົາໄດ້ສ້າງໄວ້
ໂດຍຖ້ອຍຄຳແຫ່ງອຳນາດຂອງເຮົາ, ຊຶ່ງຄື
ອຳນາດແຫ່ງພຣະວິນຍານຂອງເຮົາ.
31 ເພາະ ໂດຍ ອຳນາດ ແຫ່ງພຣະວິນ
ຍານຂອງເຮົາ, ເຮົາໄດ້ [ກ]ສ້າງເຂົາ; ແທ້ຈິງ
ແລ້ວ, ທຸກສິ່ງ ທັງທາງ [ຂ]ຝ່າຍວິນຍານ ແລະ
ທັງຝ່າຍໂລກ—
32 ທຳອິດແມ່ນ [ກ]ຝ່າຍວິນຍານ, ທີສອງ
ແມ່ນຝ່າຍ ໂລກ, ຊຶ່ງຄືການເລີ່ມຕົ້ນວຽກ
ງານຂອງເຮົາ; ແລະ ອີກເທື່ອໜຶ່ງ, ທຳອິດ
ແມ່ນຝ່າຍ ໂລກ, ແລະ ທີສອງ ແມ່ນຝ່າຍ
ວິນຍານ, ຊຶ່ງຄືບັ້ນປາຍຂອງວຽກງານຂອງ
ເຮົາ—
33 ເຮົາກ່າວກັບພວກເຈົ້າ ເພື່ອພວກເຈົ້າ
ຈະເຂົ້າໃຈຕາມທຳມະຊາດ; ແຕ່ສຳລັບເຮົາ
ແລ້ວ, ວຽກງານຂອງເຮົາ [ກ]ບໍ່ມີທີ່ສິ້ນສຸດ,
ທັງບໍ່ມີການເລີ່ມຕົ້ນ; ແຕ່ມັນຖືກມອບໃຫ້
ແກ່ພວກເຈົ້າ ເພື່ອພວກເຈົ້າຈະເຂົ້າໃຈ,
ເພາະພວກເຈົ້າໄດ້ທູນຖາມເຮົາ ແລະ ເຫັນ
ພ້ອມນຳກັນ.
34 ດັ່ງ ນັ້ນ, ຕາມ ຄວາມ ຈິງ ເຮົາ ກ່າວ
ກັບ ພວກ ເຈົ້າວ່າ ສຳ ລັບເຮົາ ທຸກສິ່ງເປັນ
ທາງຝ່າຍ ວິນຍານ, ແລະ ບໍ່ມີ ຈັກເທື່ອທີ່
ເຮົາໄດ້ມອບກົດທີ່ເປັນທາງຝ່າຍໂລກໃຫ້
ພວກເຈົ້າ; ທັງບໍ່ໃຫ້ມະນຸດຄົນໃດ, ຫລື ລູກ
ຫລານມະນຸດຄົນໃດ; ທັງບໍ່ໃຫ້ອາດາມ,
ບິດາຂອງພວກເຈົ້າ, ຜູ້ທີ່ເຮົາໄດ້ສ້າງ.
35 ຈົ່ງເບິ່ງ, ເຮົາໄດ້ມອບໃຫ້ແກ່ລາວ
ເພື່ອລາວຈະເປັນ [ກ]ຕົວແທນອິດສະລະ

---

26 *ກ* ຄມພ ມີຄາເອນ; ອາດາມ.
*ຂ* ຄມພ ອັກຄະທູດ.
*ຄ* 1 ກຣທ 15:52–55.
*ງ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ອະມະຕະ, ຄວາມເປັນອະມະຕະ.
*ຈ* ຢຮ 5:28–29.
27 *ກ* ຄມພ ຊອບທຳ, ຄວາມຊອບທຳ.
*ຂ* ມທ 25:33. ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
28 *ກ* ມທ 25:41; ຄພ 29:41.
*ຂ* ຄພ 43:33.
*ຄ* ຄມພ ມານ.
29 *ກ* ຢຮ 7:34; ຄພ 76:112.
30 *ກ* ມທ 19:30; 1 ນຟ 13:42.
31 *ກ* ຄມພ ສ້າງ, ການສ້າງ.
*ຂ* ມຊ 3:4–5.
32 *ກ* ຄມພ ການສ້າງວິນຍານ.
33 *ກ* ພສສ 111:7–8; ມຊ 1:4.
35 *ກ* ຄມພ ອຳເພີໃຈ.

ພາບຂອງຕົນເອງ; ແລະ ເຮົາໄດ້ມອບບັນ
ຍັດໃຫ້ແກ່ລາວ, ແຕ່ບັນຍັດທາງຝ່າຍໂລກ
ເຮົາບໍ່ໄດ້ມອບໃຫ້ແກ່ລາວ, ເພາະ [ຂ]ບັນ
ຍັດຂອງເຮົາເປັນທາງຝ່າຍວິນຍານ; ມັນບໍ່
ເປັນທາງຝ່າຍທຳມະຊາດ ຫລື ທາງຝ່າຍ
ໂລກ, ທັງບໍ່ເປັນການມະລົນ ຫລື ຕັນຫາ
ໜ້າມືດ.

36 ແລະ ເຫດການໄດ້ບັງເກີດຂຶ້ນ ຄື
ອາດາມ, ໂດຍທີ່ໄດ້ຖືກ [ກ]ມານລໍ້ລວງ—
ເພາະ, ຈົ່ງເບິ່ງ, ມານຢູ່ກ່ອນອາດາມ, ເພາະ
ມັນໄດ້ [ຂ]ກະບົດຕໍ່ຕ້ານເຮົາ, ກ່າວວ່າ, ຈົ່ງ
ມອບ [ຄ]ກຽດຕິຍົດຂອງທ່ານໃຫ້ເຮົາ, ຊຶ່ງ
ເປັນ [ງ]ອຳນາດຂອງເຮົາ; ແລະ ມັນໄດ້ເຮັດ
ໃຫ້ [ຈ]ໜຶ່ງສ່ວນສາມຂອງ [ສ]ໄພ່ພົນຂອງ
ສະຫວັນຫັນໜີຈາກເຮົານຳອີກ ເພາະ [ຊ]ອຳ
ເພີໃຈຂອງພວກເຂົາ;

37 ແລະ ພວກເຂົາຖືກໂຍນລົງມາ, ແລະ
ດັ່ງນັ້ນຈຶ່ງເກີດມີ [ກ]ມານ ແລະ [ຂ]ບໍລິວານ
ຂອງມັນ;

38 ແລະ, ຈົ່ງ ເບິ່ງ, ມີ ບ່ອນ ຕຽມ ໄວ້
ໃຫ້ພວກເຂົາຕັ້ງແຕ່ຕົ້ນ, ຊຶ່ງບ່ອນນັ້ນຄື
[ກ]ນະລົກ.

39 ແລະ ມັນຈຳເປັນວ່າມານຈະຕ້ອງ [ກ]ລໍ້
ລວງລູກຫລານມະນຸດ, ຖ້າບໍ່ດັ່ງນັ້ນພວກ
ເຂົາຈະບໍ່ສາມາດເປັນຕົວແທນອິດສະລະ
ພາບຂອງຕົນເອງ; ເພາະຖ້າຫາກພວກເຂົາ
ບໍ່ເຄີຍມີ [ຂ]ຄວາມຂົມ ພວກເຂົາຈະຮູ້ຄວາມ
ຫວານບໍ່ໄດ້—

40 ດັ່ງນັ້ນ, ເຫດການໄດ້ບັງເກີດຂຶ້ນ
ຄື ມານໄດ້ລໍ້ລວງອາດາມ, ແລະ ລາວກໍ
ໄດ້ກິນ [ກ]ໝາກໄມ້ທີ່ຕ້ອງຫ້າມ ແລະ ລ່ວງ
ລະເມີດບັນຍັດ, ຊຶ່ງໃນການນີ້ ລາວຈຶ່ງ
[ຂ]ຂຶ້ນຢູ່ກັບຄວາມປະສົງຂອງມານ, ເພາະ
ລາວຜ່າຍແພ້ຕໍ່ການລໍ້ລວງ.

41 ດັ່ງນັ້ນ, ເຮົາ, ອົງພຣະຜູ້ເປັນເຈົ້າ, ຈຶ່ງ
ເຮັດໃຫ້ລາວຖືກຂັບ [ກ]ໄລ່ອອກຈາກ [ຂ]ສວນ
ເອເດນ, ຈາກທີ່ປະທັບຂອງເຮົາ, ເພາະ
ການລ່ວງລະເມີດຂອງລາວ, ຊຶ່ງໃນການ
ນີ້ ລາວຈຶ່ງຕາຍ [ຄ]ທາງວິນຍານ, ຊຶ່ງ ເປັນ
ຄວາມຕາຍເທື່ອທຳອິດ, ແມ່ນແຕ່ເປັນ
[ງ]ຄວາມຕາຍເທື່ອສຸດທ້າຍ, ຊຶ່ງຄືທາງຝ່າຍ
ວິນຍານ, ຊຶ່ງຈະຖືກປະກາດແກ່ຄົນຊົ່ວ
ເມື່ອເຮົາຈະກ່າວວ່າ: ຈົ່ງອອກໄປ, ເຈົ້າຜູ້
ຖືກ [ຈ]ສາບແຊ່ງ.

42 ແຕ່, ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າ
ວ່າ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ມອບ
ໃຫ້ແກ່ອາດາມ ແລະ ໃຫ້ແກ່ລູກຫລານ
ຂອງລາວ, ວ່າພວກເຂົາຈະບໍ່ [ກ]ຕາຍ ອັນ
ກ່ຽວກັບຄວາມຕາຍທາງໂລກ, ຈົນກວ່າ
ເຮົາ, ອົງພຣະຜູ້ເປັນເຈົ້າ, ຈະສົ່ງ [ຂ]ເຫລົ່າ
ທູດອອກໄປປະກາດ [ຄ]ການກັບໃຈ ແລະ
[ງ]ການໄຖ່ແກ່ພວກເຂົາ, ໂດຍຜ່ານສັດທາ

35 *ຂ* ຄມພ ພຣະບັນຍັດ ຂອງພຣະເຈົ້າ.
36 *ກ* ຄພ 76:25–26; ມຊ 4:1–4.
*ຂ* ຄມພ ກອງປະຊຸມ ໃນສະຫວັນ.
*ຄ* ຄມພ ໃຫ້ກຽດ.
*ງ* ອຊຢ 14:12–14; ຄພ 76:28–29.
*ຈ* ພນມ 12:3–4.
*ສ* ຄພ 38:1; 45:1. ຄມພ ຊີວິດກ່ອນເກີດ.
*ຊ* ຄມພ ອຳເພີໃຈ.
37 *ກ* ຄມພ ມານ.
*ຂ* 2 ປຕ 2:4; ຢດ 1:6; ມຊ 7:26. ຄມພ ທູດ, ເທວະດາ.
38 *ກ* ຄມພ ນະລົກ.
39 *ກ* ມຊ 4:3–4. ຄມພ ລໍ້ລວງ, ການລໍ້ລວງ.
*ຂ* ມຊ 6:55.
40 *ກ* ປຖກ 3:6; ມຊ 4:7–13.
*ຂ* 2 ນຟ 10:24; ມຊຢ 16:3–5; ແອວ 5:41–42.
41 *ກ* ຄມພ ການຕົກຂອງ ອາດາມ ແລະ ເອວາ.
*ຂ* ຄມພ ເອເດນ.
*ຄ* ຄມພ ຄວາມຕາຍ ທາງວິນຍານ.
*ງ* ແອວ 40:26.
*ຈ* ຄພ 29:27–28; 76:31–39.
42 *ກ* 2 ນຟ 2:21. ຄມພ ຄວາມຕາຍ ທາງຮ່າງກາຍ.
*ຂ* ແອວ 12:28–30.
*ຄ* ຄມພ ກັບໃຈ, ການກັບໃຈ.
*ງ* ຄມພ ໄຖ່, ການໄຖ່, ຖືກໄຖ່.

ໃນພຣະນາມຂອງ [ຈ]ພຣະບຸດອົງດຽວທີ່ຖື
ກຳເນີດຂອງເຮົາ.
43 ແລະ ດັ່ງນັ້ນ ເຮົາ, ອົງພຣະ ຜູ້ເປັນ
ເຈົ້າ, ຈຶ່ງໄດ້ກຳນົດວັນເວລາ [ກ]ແຫ່ງການ
ທົດລອງໃຫ້ແກ່ມະນຸດ—ວ່າ ໂດຍຄວາມ
ຕາຍທາງທຳມະຊາດຂອງເຂົາ, ເຂົາຈະຖືກ
[ຂ]ຍົກຂຶ້ນສູ່ຄວາມເປັນ [ຄ]ອະມະຕະ ໄປສູ່ [ງ]ຊີ
ວິດນິລັນດອນ, ແມ່ນແຕ່ຫລາຍຕໍ່ຫລາຍ
ຄົນທີ່ຈະເຊື່ອ;
44 ແລະ ຄົນທີ່ບໍ່ເຊື່ອ ໄປສູ່ [ກ]ຄວາມອັບ
ປະໂຫຍດນິລັນດອນ; ເພາະພວກເຂົາບໍ່
ສາມາດໄດ້ຮັບການໄຖ່ຈາກການຕົກທາງ
ວິນຍານຂອງພວກເຂົາ, ເພາະພວກເຂົາບໍ່
ກັບໃຈ;
45 ເພາະພວກເຂົາຮັກຄວາມມືດຫລາຍ
ກວ່າຄວາມສະຫວ່າງ, ແລະ [ກ]ການກະທຳ
ຂອງພວກເຂົາກໍຊົ່ວຮ້າຍ, ແລະ ພວກເຂົາ
ໄດ້ [ຂ]ຮັບຄ່າຕອບແທນຂອງຕົນ ຈາກຜູ້ທີ່
ພວກເຂົາເລືອກເຊື່ອຟັງ.
46 ແຕ່ຈົ່ງ ເບິ່ງ, ເຮົາກ່າວກັບ ພວກເຈົ້າ
ວ່າ [ກ]ເດັກນ້ອຍໆໄດ້ຮັບ [ຂ]ການໄຖ່ນັບແຕ່
ການວາງຮາກຖານຂອງໂລກ ຜ່ານພຣະ
ອົງດຽວທີ່ຖືກຳເນີດຂອງເຮົາ;
47 ດັ່ງນັ້ນ, ພວກເຂົາເຮັດບາບບໍ່ໄດ້,
ເພາະອຳນາດບໍ່ໄດ້ຖືກມອບໃຫ້ແກ່ຊາຕານ
ເພື່ອ [ກ]ລໍ້ລວງເດັກນ້ອຍໆ, ຈົນກວ່າພວກ
ເຂົາເລີ່ມ [ຂ]ຮູ້ຈັກຮັບຜິດຊອບຢູ່ຕໍ່ໜ້າເຮົາ;
48 ເພາະມັນຖືກມອບໃຫ້ແກ່ພວກເຂົາ
ແມ່ນແຕ່ດັ່ງທີ່ເຮົາປະສົງ, ຕາມຄວາມພໍ
ໃຈຂອງເຮົາເອງ, ເພື່ອວ່າຄວາມຍິ່ງໃຫຍ່
ຈະຖືກຮຽກຮ້ອງຈາກມືຂອງ [ກ]ບັນພະບຸລຸດ
ຂອງພວກເຂົາ.
49 ແລະ, ອີກ ເທື່ອ ໜຶ່ງ, ເຮົາ ກ່າວ ກັບ
ພວກເຈົ້າວ່າ ຜູ້ໃດທີ່ມີຄວາມຮູ້, ເຮົາບໍ່ໄດ້
ບັນຊາໃຫ້ກັບໃຈບໍ?
50 ແລະ ຄົນທີ່ບໍ່ [ກ]ເຂົ້າໃຈ, ມັນກໍເປັນໜ້າ
ທີ່ຮັບຜິດຊອບຂອງເຮົາທີ່ຈະເຮັດຕາມສິ່ງ
ທີ່ມີຂຽນໄວ້. ແລະ ບັດນີ້ ເຮົາຈະບໍ່ປະກາດ
ແກ່ພວກເຈົ້າອີກໃນເວລານີ້. ອາແມນ.

# ພາກທີ 30

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ເດວິດ ວິດເມີ, ພີເຕີ ວິດເມີ ຜູ້ລູກ, ແລະ ຈອນ ວິດເມີ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນກັນຍາ 1830, ຫລັງຈາກກອງປະຊຸມໃຫຍ່ສາມມື້ທີ່ເມືອງເຟແອດ, ແຕ່ກ່ອນທີ່ພວກແອວເດີຂອງສາດສະໜາຈັກໄດ້ແຍກຍ້າຍກັນໄປ. ໃນຕອນທຳອິດ ຂໍ້ຄວາມເຫລົ່ານີ້ໄດ້ຖືກພິມເປັນການເປີດເຜີຍ*

42 ຈ ມຊ 5:6–8.
43 ກ ແອວ 12:24; 42:10.
ຂ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຄ ມຊ 1:39.
ຄມພ ອະມະຕະ, ຄວາມເປັນອະມະຕະ.
ງ ຄມພ ຊີວິດນິລັນດອນ.
44 ກ ຄພ 19:7–12.
ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
45 ກ ຢຮ 3:18–20; ຄພ 93:31–32.
ຂ ມຊຢ 2:32–33; ແອວ 3:26–27; 5:41–42; 30:60.
46 ກ ມຣນ 8:8, 12; ຄພ 93:38.
ຄມພ ເດັກ, ເດັກນ້ອຍ.
ຂ ຄພ 74:7.
ຄມພ ໄຖ່, ການໄຖ່, ຖືກໄຖ່.
47 ກ ຄມພ ລໍ້ລວງ, ການລໍ້ລວງ.
ຂ ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
48 ກ ຄພ 68:25.
50 ກ ຄພ 137:7–10.
ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.

*ສາມເລື່ອງ; ສາດສະດາໄດ້ໂຮມມັນເຂົ້າກັນເປັນພາກດຽວສຳລັບຄຳສອນ ແລະ ພັນທະສັນຍາ ຊຸດສະບັບ 1835.*

*1–4, ເດວິດ ວິດເມີ ຖືກຕີສອນສຳລັບການບໍ່ໄດ້ຮັບ ໃຊ້ຢ່າງພາກພຽນ; 5–8, ພີເຕີ ວິດເມີ ຜູ້ລູກ, ຕ້ອງໄປກັບອໍລີເວີ ຄາວເດີຣີ ເພື່ອເຜີຍແຜ່ສາດສະໜາຕໍ່ຊາວເລມັນ; 9–11, ຈອນ ວິດເມີ ຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ.*

1 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, [ກ]ເດວິດ, ວ່າ
ເຈົ້າໄດ້ [ຂ]ຢ້ານກົວມະນຸດ ແລະ ບໍ່ໄດ້ [ຄ]ວາງ
ໃຈໃນເຮົາເພື່ອພະລັງດັ່ງທີ່ເຈົ້າຄວນຈະ
ເຮັດ.
2 ແຕ່ຈິດໃຈຂອງເຈົ້າຢູ່ນຳເລື່ອງທີ່ເປັນ
ຂອງ [ກ]ໂລກຫລາຍກວ່າເລື່ອງທີ່ເປັນຂອງ
ເຮົາ, ພຣະຜູ້ສ້າງຂອງເຈົ້າ, ແລະ ການປະ
ຕິບັດສາດສະໜາກິດທີ່ເຈົ້າຖືກເອີ້ນ; ແລະ
ເຈົ້າບໍ່ໄດ້ເອົາໃຈໃສ່ກັບພຣະວິນຍານຂອງ
ເຮົາ, ແລະ ຄົນທີ່ເຮົາໄດ້ແຕ່ງຕັ້ງໄວ້ເໜືອ
ເຈົ້າ, ແຕ່ຖືກຊັກຈູງໄປໂດຍຜູ້ຄົນທີ່ເຮົາບໍ່
ໄດ້ບັນຊາ.
3 ດັ່ງນັ້ນ, ເຈົ້າຈຶ່ງຖືກປະໃຫ້ທູນຖາມ
ຈາກເຮົາເພື່ອຕົວເອງ, ແລະ [ກ]ໄຕ່ຕອງເຖິງ
ເລື່ອງທີ່ເຈົ້າໄດ້ຮັບ.
4 ແລະ ບ່ອນພັກເຊົາຂອງເຈົ້າຈະເປັນ
ເຮືອນຂອງພໍ່ເຈົ້າ, ຈົນກວ່າເຮົາຈະມອບ
ບັນຍັດໃຫ້ແກ່ເຈົ້າຕື່ມອີກ. ແລະ ເຈົ້າຈົ່ງ
ເອົາໃຈໃສ່ຕໍ່ [ກ]ການປະຕິບັດສາດສະໜາ
ກິດໃນສາດສະໜາຈັກ, ແລະ ຕໍ່ໂລກ, ແລະ
ໃນພາກພື້ນຕ່າງໆທີ່ອ້ອມຮອບ. ອາແມນ.
5 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, [ກ]ພີເຕີ, ວ່າ
ເຈົ້າຈົ່ງ [ຂ]ເດີນທາງໄປກັບອໍລີເວີ ອ້າຍນ້ອງ
ຂອງເຈົ້າ; ເພາະ [ຄ]ເວລາມາເຖິງແລ້ວ ຊຶ່ງ
ເຮົາເຫັນສົມຄວນທີ່ເຈົ້າຈະເປີດປາກປະ
ກາດພຣະກິດຕິຄຸນຂອງເຮົາ; ສະນັ້ນ, ຢ່າສູ່
ຢ້ານ, ແຕ່ຈົ່ງ [ງ]ເອົາໃຈໃສ່ຕໍ່ຖ້ອຍຄຳ ແລະ
ຄຳແນະນຳຂອງອ້າຍນ້ອງຂອງເຈົ້າ, ຊຶ່ງ
ລາວຈະມອບໃຫ້ແກ່ເຈົ້າ.
6 ແລະ ເຈົ້າຈົ່ງເປັນທຸກໃນຄວາມທຸກ
ທໍລະມານທັງໝົດຂອງລາວ, ໂດຍຍົກໃຈ
ຂອງເຈົ້າຂຶ້ນຫາເຮົາໃນຄຳອະທິຖານ ແລະ
ສັດທາສະເໝີ, ເພື່ອການປົດປ່ອຍຂອງ
ລາວ ແລະ ຂອງເຈົ້າ; ເພາະເຮົາໄດ້ມອບ
ພະລັງໃຫ້ແກ່ລາວ ເພື່ອເສີມສ້າງ [ກ]ສາດ
ສະໜາຈັກຂອງເຮົາຂຶ້ນໃນບັນດາ [ຂ]ຊາວ
ເລມັນ;
7 ແລະ ບໍ່ມີຄົນໃດທີ່ເຮົາໄດ້ແຕ່ງຕັ້ງໃຫ້
ເປັນທີ່ປຶກສາ [ກ]ຂອງລາວໃນສາດສະໜາ
ຈັກ, ກ່ຽວກັບເລື່ອງຂອງສາດສະໜາຈັກ,
ຍົກເວັ້ນແຕ່ອ້າຍນ້ອງຂອງລາວ, ໂຈເຊັບ
ສະມິດ, ຜູ້ລູກ.
8 ດັ່ງນັ້ນ, ຈົ່ງເອົາໃຈໃສ່ຕໍ່ສິ່ງເຫລົ່ານີ້
ແລະ ຈົ່ງພາກພຽນໃນການຮັກສາບັນຍັດ
ຂອງເຮົາ, ແລະ ເຈົ້າຈະໄດ້ຮັບພອນໄປສູ່ຊີ
ວິດນິລັນດອນ. ອາແມນ.
9 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, ຜູ້ຮັບໃຊ້

**30** 1 *ກ* ຄມພ ວິດເມີ, ເດວິດ.
*ຂ* ກຈກ 5:29.
*ຄ* 2 ຂຄ 16:7–9.
2 *ກ* ຄພ 25:10.
3 *ກ* ຄມພ ໄຕ່ຕອງ.
4 *ກ* ຄມພ ປະຕິບັດ; ຮັບໃຊ້, ການຮັບໃຊ້.
5 *ກ* ຄມພ ວິດເມີ, ພີເຕີ, ຜູ້ລູກ.
*ຂ* ຄພ 32:1–3.
*ຄ* ຄພ 11:15.
*ງ* ຄມພ ການສະໜັບສະໜູນຜູ້ນຳຂອງສາດສະໜາຈັກ; ຄຳແນະນຳ.
6 *ກ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.
*ຂ* ຄພ 3:20; 49:24. ຄມພ ຊາວເລມັນ.
7 *ກ* ຄພ 20:2–3.

ຂອງ ເຮົາ ຈອນ, ວ່າ ນັບ ຈາກ ເວລາ ນີ້ ໄປ
ເຈົ້າຈົ່ງອອກໄປ [ກ]ປະກາດ ພຣະກິດຕິຄຸນ
ຂອງເຮົາ, ຄືກັບວ່າ [ຂ]ສຽງແກ.
10 ແລະ ການທຳງານຂອງເຈົ້າຈະເປັນຢູ່
ທີ່ເຮືອນຂອງອ້າຍນ້ອງຂອງເຈົ້າ ຟີລິບ ເບີ
ໂລ, ແລະ ໃນພາກພື້ນທີ່ອ້ອມຮອບ, ແທ້ຈິງ
ແລ້ວ, ບ່ອນໃດກໍຕາມທີ່ຄົນຈະຟັງເຈົ້າ, ຈົນ
ກວ່າເຮົາຈະບັນຊາເຈົ້າໃຫ້ໄປຈາກທີ່ນັ້ນ.
11 ແລະ ການທຳງານທັງໝົດຂອງເຈົ້າ
ຈະເປັນຢູ່ໃນຊີໂອນ, ດ້ວຍສຸດຈິດວິນຍານ
ຂອງເຈົ້າ, ນັບແຕ່ນີ້ເປັນຕົ້ນໄປ; ແທ້ຈິງ
ແລ້ວ, ເຈົ້າຈະເປີດປາກຂອງເຈົ້າໃນອຸດົມ
ການຂອງເຮົາສະເໝີ, ໂດຍບໍ່ [ກ]ຢ້ານວ່າ
[ຂ]ມະນຸດ ຈະສາມາດເຮັດຫຍັງ, ເພາະເຮົາ
[ຄ]ຢູ່ນຳເຈົ້າ. ອາແມນ.

# ພາກທີ 31

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ທອມມັສ ບີ ມາສ໌, ເດືອນກັນຍາ 1830. ເຫດການນັ້ນໄດ້ເກີດຂຶ້ນທັນທີຫລັງຈາກກອງປະຊຸມໃຫຍ່ຂອງສາດສະໜາຈັກ (ເບິ່ງ ຫົວຂໍ້ຂອງ ພາກທີ 30). ທອມມັສ ບີ ມາສ໌ ໄດ້ຮັບບັບຕິສະມາໃນຕົ້ນເດືອນ ແລະ ໄດ້ຮັບການແຕ່ງຕັ້ງເປັນແອວເດີໃນສາດສະໜາຈັກກ່ອນໄດ້ຮັບການເປີດເຜີຍນີ້.*

*1–6, ທອມມັສ ບີ ມາສ໌ ຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ ແລະ ໄດ້ຮັບຄຳສັນຍາວ່າຄອບຄົວຂອງລາວຈະຢູ່ເຢັນເປັນສຸກ; 7–13, ລາວໄດ້ຮັບຄຳແນະນຳໃຫ້ອົດທົນ, ອະທິຖານສະເໝີ, ແລະ ປະຕິບັດຕາມພຣະຜູ້ປອບໂຍນ.*

1 [ກ]ທອມມັສ, ບຸດຂອງເຮົາ, ເຈົ້າເປັນສຸກ
ແລ້ວ ເພາະສັດທາຂອງເຈົ້າໃນ ວຽກງານ
ຂອງເຮົາ.
2 ຈົ່ງ ເບິ່ງ, ເຈົ້າ ໄດ້ ມີ ຄວາມ ທຸກ ທໍ ລະ
ມານຫລາຍເພາະຄອບຄົວຂອງເຈົ້າ; ເຖິງ
ຢ່າງໃດກໍຕາມ, ເຮົາຈະອວຍພອນເຈົ້າ
ແລະ ຄອບຄົວຂອງເຈົ້າ, ແທ້ຈິງແລ້ວ, ລູກ
ນ້ອຍໆຂອງເຈົ້າ; ແລະ ວັນນັ້ນຈະມາເຖິງ
ເມື່ອພວກເຂົາຈະເຊື່ອ ແລະ ຮູ້ຄວາມຈິງ
ແລະ ເປັນອັນໜຶ່ງດຽວກັນກັບເຈົ້າໃນສາດ
ສະໜາຈັກຂອງເຮົາ.
3 ຈົ່ງລົ້ນເລີງ ແລະ ປິຕິຍິນດີເຖີດ, ເພາະ
ຊົ່ວໂມງແຫ່ງພາລະກິດຂອງເຈົ້າມາເຖິງ
ແລ້ວ; ແລະ ລີ້ນຂອງເຈົ້າຈະຖືກມາຍອອກ,
ແລະ ເຈົ້າຈະປະກາດຂ່າວ [ກ]ອັນໜ້າຊື່ນຊົມ
ແຫ່ງຄວາມສຸກອັນຍິ່ງໃຫຍ່ແກ່ຄົນລຸ້ນນີ້.
4 ເຈົ້າຈົ່ງ [ກ]ປະກາດເລື່ອງທີ່ໄດ້ຖືກເປີດ
ເຜີຍແກ່ຜູ້ຮັບໃຊ້ຂອງເຮົາ, ໂຈເຊັບ ສະມິດ,
ຜູ້ລູກ. ເຈົ້າຈົ່ງເລີ່ມຕົ້ນ ສັ່ງສອນນັບຈາກ
ເວລານີ້ໄປ, ແທ້ຈິງແລ້ວ, ເພື່ອເກັບກ່ຽວຢູ່
ໃນທົ່ງຊຶ່ງ [ຂ]ຂາວພ້ອມແລ້ວທີ່ຈະເຜົາ.
5 ສະນັ້ນ, ຈົ່ງ [ກ]ຍື່ນກ່ຽວຂອງເຈົ້າອອກ
ມາດ້ວຍສຸດຈິດວິນຍານຂອງເຈົ້າ, ແລະ

9 *ກ* ຄພ 15:6.
*ຂ* ຄພ 33:2.
11 *ກ* ຄມພ ກ້າຫານ, ຄວາມກ້າຫານ, ຢ່າງກ້າຫານ; ຢ້ານກົວ, ຄວາມຢ້ານກົວ.
*ຂ* ອຊຢ 51:7.
*ຄ* ມທ 28:19–20.
**31** 1 *ກ* ຄມພ ມາສ໌, ທອມມັສ ບີ.
3 *ກ* ອຊຢ 52:7; ລກ 2:10–11; ມຊຢ 3:3–5.
4 *ກ* ມຊຢ 18:19; ຄພ 42:12; 52:36.
*ຂ* ຄພ 4:4–6.
5 *ກ* ພນມ 14:15.

ບາບ ຂອງເຈົ້າ ໄດ້ຖືກ [ຂ]ອະໄພໃຫ້ແລ້ວ,
ແລະ ເຈົ້າຈະໜັກດ້ວຍ [ຄ]ມັດເຂົ້າຢູ່ເທິງບ່າ
ຂອງເຈົ້າ, ເພາະ [ງ]ຄົນງານກໍເໝາະສົມກັບ
ຄ່າຈ້າງຂອງເຂົາ. ດັ່ງນັ້ນ, ຄອບຄົວຂອງ
ເຈົ້າຈະມີຊີວິດຢູ່.
6 ຈົ່ງເບິ່ງ, ຕາມຄວາມຈິງ ເຮົາກ່າວກັບ
ເຈົ້າວ່າ ຈົ່ງໄປຈາກພວກເຂົາພຽງຊົ່ວໄລຍະ
ສັ້ນໆ, ແລະ ປະກາດ ຖ້ອຍຄຳຂອງເຮົາ,
ແລະ ເຮົາຈະຈັດຫາບ່ອນໜຶ່ງໃຫ້ພວກເຂົາ.
7 ແທ້ຈິງແລ້ວ, ເຮົາຈະ [ກ]ເປີດໃຈຂອງຜູ້
ຄົນ, ແລະ ເຂົາຈະຕ້ອນຮັບເຈົ້າ. ແລະ ເຮົາ
ຈະສະຖາປະນາໜ່ວຍຂອງສາດສະໜາ
ຈັກໂດຍມືຂອງເຈົ້າ;
8 ແລະ ເຈົ້າຈະເຮັດໃຫ້ເຂົາ [ກ]ເຂັ້ມແຂງ
ແລະ ຕຽມເຂົາສຳລັບເວລາທີ່ເຂົາຈະຖືກ
ເຕົ້າໂຮມເຂົ້າກັນ.
9 ຈົ່ງ [ກ]ອົດທົນໃນ [ຂ]ຄວາມທຸກທໍລະມານ,
ຢ່າໝິ່ນປະໝາດຄົນທີ່ໝິ່ນປະໝາດ. ຈົ່ງ
ປົກຄອງ [ຄ]ບ້ານເຮືອນຂອງເຈົ້າດ້ວຍຄວາມ
ອ່ອນໂຍນ, ແລະ ຈົ່ງແນ່ວແນ່.
10 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ ເຈົ້າຈະ
ເປັນໝໍໃຫ້ສາດສະໜາຈັກ, ແຕ່ບໍ່ແມ່ນໃຫ້
ໂລກ, ເພາະພວກເຂົາຈະບໍ່ຕ້ອນຮັບເຈົ້າ.
11 ເຈົ້າຈົ່ງໄປຕາມທາງຂອງເຈົ້າ ບ່ອນ
ໃດກໍຕາມທີ່ເຮົາປະສົງ, ແລະ ຈະມອບມັນ
ໃຫ້ແກ່ເຈົ້າໂດຍ [ກ]ພຣະຜູ້ປອບໂຍນເຖິງສິ່ງ
ທີ່ເຈົ້າຈະເຮັດ ແລະ ບ່ອນທີ່ເຈົ້າຈະໄປຫາ.
12 ຈົ່ງ [ກ]ອະທິຖານສະເໝີ, ຖ້າບໍ່ດັ່ງນັ້ນ
ເຈົ້າຈະເຂົ້າໄປສູ່ [ຂ]ການລໍ້ລວງ ແລະ ສູນ
ເສຍລາງວັນຂອງເຈົ້າ.
13 ຈົ່ງ [ກ]ຊື່ສັດຈົນເຖິງທີ່ສຸດ, ແລະ ເບິ່ງ
ແມ, ເຮົາ [ຂ]ຢູ່ນຳເຈົ້າ. ຖ້ອຍຄຳເຫລົ່ານີ້ບໍ່
ແມ່ນຂອງມະນຸດ ຫລື ຄົນໃດ, ແຕ່ແມ່ນ
ຂອງເຮົາ, ແມ່ນແຕ່ພຣະເຢຊູຄຣິດ, ພຣະຜູ້
ໄຖ່ຂອງເຈົ້າ, ໂດຍ [ຄ]ພຣະປະສົງຂອງພຣະ
ບິດາ. ອາແມນ.

## ພາກທີ 32

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ພາລີ ພີ ພະແຣັດ ແລະ ຊີບາພີເຕີສັນ, ໃນເມືອງແມນເຈດສະເຕີ, ລັດນິວຢອກ, ຕົ້ນເດືອນຕຸລາ 1830. ບັນດາແອວເດີຮູ້ສຶກມີຄວາມສົນໃຈ ແລະ ມີຄວາມປາດຖະໜາຫລາຍໃນເລື່ອງຊາວເລມັນ, ຊຶ່ງສາດສະໜາຈັກຫາກໍຮຽນຮູ້ຈາກພຣະຄຳພີມໍມອນເຖິງພອນຂອງພວກເຂົາທີ່ທຳນາຍໄວ້. ເນື່ອງດ້ວຍເຫດນີ້, ຈຶ່ງມີການອ້ອນວອນເພື່ອພຣະຜູ້ເປັນເຈົ້າຈະໄດ້ສະແດງໃຫ້ຮູ້ພຣະປະສົງຂອງພຣະອົງວ່າ ຄວນສົ່ງບັນດາແອວເດີໄປຫາຊາວອິນເດຍແດງຢູ່ພາກຕາເວັນຕົກຫລືບໍ່ໃນເວລານັ້ນ. ການເປີດເຜີຍໄດ້ເກີດຂຶ້ນໃນເວລາຕໍ່ມາ.*

5 *ຂ* ຄມພ ອະໄພ, ໃຫ້ອະໄພ.
*ຄ* ຄພ 79:3.
*ງ* ລກ 10:3–11; ຄພ 75:24.
7 *ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
8 *ກ* ຄພ 81:5; 108:7.
9 *ກ* ຄມພ ອົດທົນ, ຄວາມອົດທົນ.
*ຂ* ຄມພ ຍາກລຳບາກ, ຄວາມຍາກລຳບາກ.
*ຄ* ຄມພ ຄອບຄົວ—ໜ້າທີ່ຮັບຜິດຊອບຂອງພໍ່ແມ່.
11 *ກ* ຄມພ ພຣະຜູ້ປອບໂຍນ; ພຣະວິນຍານບໍລິສຸດ.
12 *ກ* 3 ນຟ 18:17–21. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄມພ ລໍ້ລວງ, ການລໍ້ລວງ.
13 *ກ* ຄມພ ອົດທົນ, ຄວາມອົດທົນ.
*ຂ* ມທ 28:20.
*ຄ* ຄມພ ພຣະເຢຊູຄຣິດ—ສິດອຳນາດ.

*1–3, ພາລີ ພີ ພະແຣັດ ແລະ ຊີບາ ພີເຕີສັນ ຖືກເອີ້ນໃຫ້ສັ່ງສອນຊາວເລມັນ ແລະ ເດີນທາງໄປກັບອໍລີເວີ ຄາວເດີຣີ ແລະ ພີເຕີ ວິດເມີ ຜູ້ລູກ; 4–5, ເຂົາເຈົ້າຕ້ອງອະທິຖານເພື່ອໃຫ້ເຂົ້າໃຈເລື່ອງພຣະຄຳພີ.*

1 ແລະ ບັດນີ້ ກ່ຽວກັບຜູ້ຮັບໃຊ້ຂອງເຮົາ [ກ]ພາລີ ພີ ພະແຣັດ, ຈົ່ງເບິ່ງ, ເຮົາກ່າວກັບລາວວ່າ ເຮົາມີຊີວິດຢູ່ສັນໃດ ລາວຈະປະກາດພຣະກິດຕິຄຸນຂອງເຮົາ ແລະ [ຂ]ຮຽນຮູ້ຈາກເຮົາສັນນັ້ນ, ແລະ ຈົ່ງອ່ອນໂຍນ ແລະ ຕ່ຳຕ້ອຍໃນໃຈ.

2 ແລະ ສິ່ງທີ່ເຮົາໄດ້ມອບໝາຍໃຫ້ແກ່ລາວຄື ລາວຈະ [ກ]ໄປກັບຜູ້ຮັບໃຊ້ຂອງເຮົາ, ອໍລີເວີ ຄາວເດີຣີ ແລະ ພີເຕີ ວິດເມີ, ຜູ້ລູກ, ເຂົ້າໄປຖິ່ນແຫ້ງແລ້ງກັນດານ ໃນບັນດາ [ຂ]ຊາວເລມັນ.

3 ແລະ [ກ]ຊີບາ ພີເຕີ ສັນ ກໍຈະໄປນຳພວກເຂົາຄືກັນ; ແລະ ເຮົາເອງກໍຈະໄປນຳພວກເຂົາ ແລະ ຢູ່ [ຂ]ທ່າມກາງພວກເຂົາ; ແລະ ເຮົາເປັນ [ຄ]ຜູ້ວິງວອນແທນພວກເຂົານຳພຣະບິດາ, ແລະ ບໍ່ມີສິ່ງໃດທີ່ຈະເອົາຊະນະພວກເຂົາໄດ້.

4 ແລະ ພວກເຂົາຈະ [ກ]ເອົາໃຈໃສ່ຕໍ່ເລື່ອງທີ່ມີຂຽນໄວ້, ແລະ ບໍ່ອ້າງເຖິງ [ຂ]ການເປີດເຜີຍອື່ນໃດ; ແລະ ພວກເຂົາຕ້ອງອະທິຖານສະເໝີ ເພື່ອວ່າເຮົາຈະໄດ້ [ຄ]ເປີດເຜີຍເລື່ອງນັ້ນໃຫ້ພວກເຂົາ [ງ]ເຂົ້າໃຈ.

5 ແລະ ພວກເຂົາຈະເອົາໃຈໃສ່ຕໍ່ຖ້ອຍຄຳເຫລົ່ານັ້ນ ແລະ ບໍ່ເຮັດຫລິ້ນ, ແລະ ເຮົາຈະປະທານພອນໃຫ້ແກ່ພວກເຂົາ. ອາແມນ.

## ພາກທີ 33

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ເອຊະຣາ ແຕ ແລະ ນອດທະໂຣບ ສະວິດ, ທີ່ເມືອງເຟແອດ, ລັດນິວຢອກ, ເດືອນຕຸລາ 1830. ໃນການແນະນຳການເປີດເຜີຍນີ້, ປະຫວັດຂອງໂຈເຊັບ ສະມິດ ຢືນຢັນວ່າ "ພຣະຜູ້ເປັນເຈົ້າ . . . ພ້ອມສະເໝີທີ່ຈະແນະນຳຄົນທີ່ສະແຫວງຫາຢ່າງພາກພຽນດ້ວຍສັດທາ."*

*1 – 4, ຄົນງານ ໄດ້ຖືກ ເອີ້ນ ໃຫ້ປະກາດພຣະກິດຕິຄຸນໃນຊົ່ວໂມງທີສິບເອັດ; 5–6, ສາດສະໜາຈັກໄດ້ຮັບການສະຖາປະນາຂຶ້ນ, ແລະ ຜູ້ທີ່ຖືກເລືອກຈະຖືກເຕົ້າໂຮມເຂົ້າກັນ; 7–10, ຈົ່ງກັບໃຈ, ເພາະອານາຈັກສະຫວັນໃກ້ເຂົ້າມາເຖິງແລ້ວ; 11–15, ສາດສະໜາຈັກຖືກສ້າງຂຶ້ນໄວ້ເທິງດານຫີນແຫ່ງພຣະກິດຕິຄຸນ; 16–18, ຈົ່ງຕຽມສຳລັບການສະເດັດມາຂອງເຈົ້າບ່າວ.*

**32** 1 *ກ* ຄມພ ພະແຣັດ, ພາລີ ພາກເກີ.
*ຂ* ມທ 11:28–30.
2 *ກ* ຄພ 28:8; 30:5.
*ຂ* ຄພ 3:18–20.
3 *ກ* ຄພ 58:60.
*ຂ* ມທ 18:20; ຄພ 6:32; 38:7.
*ຄ* ຄມພ ວິງວອນແທນ, ຜູ້ວິງວອນແທນ.
4 *ກ* 1 ນຟ 15:25; ຄພ 84:43–44.
*ຂ* ຄພ 28:2.
*ຄ* ຈສ—ປ 1:74.
*ງ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.

1 ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ເຈົ້າ, ຜູ້ ຮັບ ໃຊ້
ຂອງເຮົາ ເອຊະຣາ ແລະ ນອດທະ ໄຣບ,
ວ່າຈົ່ງເປີດຫູຂອງເຈົ້າ ແລະ ເຊື່ອຟັງສຸລະ
ສຽງຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງເຈົ້າ, ຊຶ່ງ [ກ]ຖ້ອຍຄຳມີຊີວິດ ແລະ ມີ
ພະລັງ, ແຫລມຄົມຫລາຍກວ່າດາບສອງ
ຄົມ, ຊຶ່ງຈະແຍກທັງຂໍ້ຕໍ່ ແລະ ໄຂໃນກະ
ດູກ, ຈິດວິນຍານ ແລະ ວິນຍານອອກຈາກ
ກັນ; ແລະ ພຣະອົງຫລີງເຫັນຄວາມນຶກຄິດ
ແລະ [ຂ]ຄວາມເຈດຕະນາຂອງໃຈ.
2 ເພາະ ຕາມ ຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າວ່າ ເຈົ້າໄດ້ຖືກເອີ້ນໃຫ້ເປັ່ງ
ສຽງຂອງເຈົ້າດັ່ງກັບ [ກ]ສຽງແກ, ເພື່ອປະ
ກາດພຣະກິດຕິຄຸນຂອງເຮົາໃຫ້ແກ່ລຸ້ນທີ່
ຄົດໂກງ ແລະ ເສຍຄົນນີ້.
3 ເພາະຈົ່ງເບິ່ງ, [ກ]ທົ່ງກໍຂາວພ້ອມແລ້ວ
ທີ່ຈະເກັບກ່ຽວ; ແລະ ນີ້ຄືຊົ່ວໂມງ [ຂ]ທີສິບ
ເອັດ, ແລະ [ຄ]ເທື່ອສຸດທ້າຍທີ່ເຮົາຈະເອີ້ນ
ຄົນງານໃຫ້ເຂົ້າໄປໃນສວນອະງຸ່ນຂອງ
ເຮົາ.
4 ແລະ [ກ]ສວນ ອະງຸ່ນ ຂອງ ເຮົາ ກັບ ມາ
[ຂ]ເສຍໄປໝົດທຸກບ່ອນ; ແລະ ບໍ່ມີໃຜເຮັດ
[ຄ]ຄວາມ ດີ ນອກ ຈາກ ຈຳນວນ ໜ້ອຍ ໜຶ່ງ
ເທົ່ານັ້ນ; ແລະ ພວກເຂົາເຮັດ [ງ]ຄວາມຜິດ
ພາດຫລາຍຢ່າງເພາະ [ຈ]ການຫລອກລວງ
ຂອງປະໂລຫິດ, ທຸກຄົນມີຈິດໃຈເສື່ອມ
ຊາມ.
5 ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າ, ວ່າ [ກ]ສາດສະໜາຈັກນີ້ ເຮົາໄດ້
[ຂ]ສະຖາປະນາມັນຂຶ້ນ ແລະ ເອີ້ນໃຫ້ອອກ
ມາຈາກຖິ່ນແຫ້ງແລ້ງກັນດານ.
6 ແລະ ແມ່ນແຕ່ເຊັ່ນນັ້ນ ເຮົາຈະ [ກ]ເຕົ້າ
ໂຮມຜູ້ທີ່ຖືກເລືອກໄວ້ຂອງເຮົາຈາກ [ຂ]ສີ່
ສ່ວນຂອງແຜ່ນດິນໂລກ, ແມ່ນແຕ່ຫລາຍຕໍ່
ຫລາຍຄົນທີ່ຈະເຊື່ອໃນເຮົາ, ແລະ ເຊື່ອຟັງ
ສຽງຂອງເຮົາ.
7 ແທ້ຈິງແລ້ວ, ຕາມຈິງ, ຕາມຈິງແລ້ວ,
ເຮົາກ່າວກັບເຈົ້າ, ວ່າທົ່ງກໍຂາວພ້ອມແລ້ວ
ທີ່ຈະເກັບກ່ຽວ; ດັ່ງນັ້ນ, ຈົ່ງເດ່ກ່ຽວຂອງ
ເຈົ້າອອກໄປ, ແລະ ເກັບກ່ຽວດ້ວຍສຸດພະ
ລັງ, ຄວາມຄິດ, ແລະ ກຳລັງຂອງເຈົ້າ.
8 ຈົ່ງ [ກ]ເປີດ ປາກ ຂອງ ເຈົ້າ ແລະ ມັນ
ຈະຖືກເຮັດໃຫ້ເຕັມ, ແລະ ເຈົ້າຈະກາຍ
ເປັນແມ່ນແຕ່ເໝືອນດັ່ງ [ຂ]ນີໄຟໃນສະໄໝ
ບູຮານ, ຜູ້ໄດ້ເດີນທາງຈາກເຢຣູຊາເລັມໄປ
ໃນຖິ່ນແຫ້ງແລ້ງກັນດານ.
9 ແທ້ ຈິງ ແລ້ວ, ຈົ່ງ ເປີດ ປາກ ຂອງ ເຈົ້າ
ແລະ ຢ່າຢັບຢັ້ງໄວ້, ແລະ ເຈົ້າຈະໜັກດ້ວຍ
[ກ]ມັດເຂົ້າຢູ່ເທິງບ່າຂອງເຈົ້າ, ເພາະເບິ່ງແມ,
ເຮົາຢູ່ນຳເຈົ້າ.
10 ແທ້ຈິງແລ້ວ, ຈົ່ງເປີດປາກຂອງເຈົ້າ
ແລະ ມັນຈະຖືກເຮັດໃຫ້ເຕັມ, ກ່າວວ່າ:
ຈົ່ງ [ກ]ກັບໃຈ, ຈົ່ງກັບໃຈເຖີດ, ແລະ ຈົ່ງຕຽມ
ທາງຂອງພຣະຜູ້ເປັນເຈົ້າ, ແລະ ເຮັດໃຫ້

**33** 1 *ກ* ຮຣ 4:12; ຮລມ 3:29–30.
*ຂ* ແອວ 18:32; ຄພ 6:16.
2 *ກ* ອຊຢ 58:1.
3 *ກ* ຢຮ 4:35; ຄພ 4:4; 12:3; 14:3.
*ຂ* ມທ 20:1–16.
*ຄ* ຢຄ 5:71; ຄພ 43:28.
4 *ກ* ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
*ຂ* 2 ນຟ 28:2–14; ມມ 8:28–41.
*ຄ* ຣມ 3:12; ຄພ 35:12.
*ງ* 2 ນຟ 28:14.
*ຈ* ຄມພ ການຫລອກລວງຂອງປະໂລຫິດ.
5 *ກ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.
*ຂ* ຄມພ ການຟື້ນຟູພຣະກິດຕິຄຸນ.
6 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* 1 ນຟ 19:15–17.
8 *ກ* ຄພ 88:81.
*ຂ* 2 ນຟ 1:26–28.
9 *ກ* ພສສ 126:6; ແອວ 26:3–5; ຄພ 75:5.
10 *ກ* ມທ 3:1–3.

ທາງຂອງພຣະ ອົງຊື່ ຕົງ; ເພາະອານາຈັກ
ສະຫວັນໃກ້ເຂົ້າມາເຖິງແລ້ວ;
11 ແທ້ ຈິງ ແລ້ວ , ຈົ່ງ ກັບ ໃຈ ແລະ ຮັບ
[ກ]ບັບຕິສະມາ, ເຈົ້າທຸກຄົນ, ເພື່ອການປົດ
ບາບຂອງເຈົ້າ; ແທ້ຈິງແລ້ວ, ລົງໄປໃນນ້ຳ
ຮັບບັບຕິສະມາ, ແລະ ຈາກນັ້ນການບັບຕິ
ສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍ
ລິສຸດ ຈະມາເຖິງ.
12 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວ ກັບ ເຈົ້າ, ນີ້ຄື [ກ]ພຣະກິດຕິຄຸນ ຂອງ
ເຮົາ; ແລະ ຈົ່ງຈື່ຈຳໄວ້ວ່າ ພວກເຂົາຕ້ອງ
ມີສັດທາໃນເຮົາ ຖ້າບໍ່ດັ່ງນັ້ນພວກເຂົາບໍ່ມີ
ທາງທີ່ຈະລອດໄດ້ເລີຍ;
13 ແລະ ເທິງ [ກ]ດານຫີນນີ້ ເຮົາຈະສ້າງ
ສາດສະໜາຈັກຂອງເຮົາຂຶ້ນ; ແທ້ຈິງແລ້ວ,
ເທິງດານຫີນນີ້ ເຈົ້າຈະຖືກສ້າງຂຶ້ນ, ແລະ
ຖ້າຫາກເຈົ້າດຳເນີນຕໍ່ໄປ, [ຂ]ປະຕູນະລົກ
ຈະເອົາຊະນະເຈົ້າບໍ່ໄດ້.
14 ແລະ ເຈົ້າຈົ່ງຈື່ຈຳທີ່ຈະຮັກສາ [ກ]ກົດ
ແລະ ພັນທະສັນຍາຂອງສາດສະໜາຈັກ.
15 ແລະ ຜູ້ໃດກໍຕາມທີ່ມີສັດທາ ເຈົ້າຈົ່ງ
[ກ]ຢືນຢັນເຂົ້າໃນສາດສະໜາຈັກຂອງເຮົາ,
ໂດຍ ການ ວາງ [ຂ]ມື, ແລະ ເຮົາຈະ ມອບ
[ຄ]ຂອງປະທານແຫ່ງພຣະວິນຍານບໍລິສຸດ
ໃຫ້ເຂົາ.
16 ແລະ ພຣະຄຳພີມໍມອນ ແລະ [ກ]ພຣະ
ຄຳພີ ທີ່ສັກສິດ ໄດ້ຖືກມອບ ໃຫ້ຈາກເຮົາ
ເພື່ອ ເປັນ [ຂ]ການ ແນະນຳ ແກ່ ເຈົ້າ; ແລະ
ອຳນາດວິນຍານຂອງເຮົາເຮັດໃຫ້ທຸກສິ່ງມີ
[ຄ]ຊີວິດຊີວາ.
17 ດັ່ງ ນັ້ນ, ຈົ່ງ ຊື່ ສັດ, ຈົ່ງ ອະ ທິ ຖານ
ສະເໝີ, ຕັດໄສ້ຕະກຽງຂອງເຈົ້າ ແລະ ໃຫ້
ມັນລຸກຢູ່, ແລະ ມີນ້ຳມັນຢູ່ນຳເຈົ້າ, ເພື່ອວ່າ
ເຈົ້າຈະຕຽມພ້ອມໃນການສະເດັດມາຂອງ
[ກ]ເຈົ້າບ່າວ—
18 ເພາະ ຈົ່ງ ເບິ່ງ, ຕາມ ຈິງ, ຕາມ ຈິງ
ແລ້ວ, ເຮົາກ່າວກັບເຈົ້າ, ວ່າເຮົາ [ກ]ມາຢ່າງ
ໄວ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 34

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ອໍສັນ ພະແຣັດ, ທີ່ເມືອງເຟແອດ, ລັດນິວຢອກ, ວັນທີ 4 ເດືອນພະຈິກ 1830. ບຣາເດີ ພະແຣັດ ມີອາຍຸໄດ້ສິບເກົ້າປີໃນຕອນນັ້ນ. ລາວໄດ້ປ່ຽນໃຈເຫລື້ອມໃສ ແລະ ຮັບບັບຕິສະມາເມື່ອລາວໄດ້ຍິນການສັ່ງສອນເທື່ອທຳອິດເລື່ອງພຣະກິດຕິຄຸນທີ່ຖືກຟື້ນຟູຄືນມາໃໝ່ຈາກອ້າຍຂອງລາວ, ພາລີ ພີ ພະແຣັດ, ເມື່ອຫົກອາທິດກ່ອນ. ການເປີດເຜີຍນີ້ໄດ້ຮັບຢູ່ໃນບ້ານຂອງພີເຕີ ວິດເມີ ຜູ້ພໍ່.*

11 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
12 *ກ* 3 ນຟ 27:13–22.
13 *ກ* ຄມພ ຫີນ.
*ຂ* ມທ 16:16–19; ຄພ 10:69–70.
14 *ກ* ອສ ຄພ 20 (ເບິ່ງ ຫົວຂໍ້ຂອງ ພາກທີ 20). ຄພ 42:13.
15 *ກ* ຄພ 20:41.
*ຂ* ຄມພ ມື, ການວາງ.
*ຄ* ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
16 *ກ* ຄມພ ພຣະຄຳພີ.
*ຂ* 2 ຕມທ 3:16.
*ຄ* ຢຮ 6:63.
17 *ກ* ມທ 25:1–13. ຄມພ ເຈົ້າບ່າວ.
18 *ກ* ພນມ 22:20. ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.

*1–4, ຄົນຊື່ສັດກາຍເປັນບຸດຂອງພຣະເຈົ້າຜ່ານການຊົດໃຊ້; 5–9, ການສັ່ງສອນພຣະກິດຕິຄຸນຕຽມທາງສຳລັບການສະເດັດມາຄັ້ງທີສອງ; 10–12, ການທຳນາຍເກີດຂຶ້ນໂດຍອຳນາດຂອງພຣະວິນຍານບໍລິສຸດ.*

1 [ກ]ອໍສັນ ບຸດຂອງເຮົາ, ຈົ່ງເຊື່ອຟັງ ແລະ
ຟັງ ແລະ ເບິ່ງສິ່ງທີ່ເຮົາ, ອົງພຣະຜູ້ເປັນ
ເຈົ້າ, ຈະກ່າວກັບເຈົ້າ, ແມ່ນແຕ່ພຣະເຢຊູ
ຄຣິດ ພຣະຜູ້ໄຖ່ຂອງເຈົ້າ;
2 [ກ]ຄວາມສະຫວ່າງ ແລະ ຊີວິດຂອງ
ໂລກ, ຄວາມສະຫວ່າງຊຶ່ງສ່ອງແສງຢູ່ໃນ
ຄວາມມືດ ແລະ ຄວາມມືດບໍ່ເຂົ້າໃຈມັນ
ເລີຍ;
3 ຜູ້ທີ່ [ກ]ຮັກໂລກ ຈົນວ່າ [ຂ]ພຣະອົງໄດ້
[ຄ]ມອບຊີວິດຂອງພຣະອົງ, ເພື່ອວ່າຫລາຍ
ຕໍ່ຫລາຍຄົນທີ່ເຊື່ອຈະກາຍເປັນ [ງ]ບຸດຂອງ
ພຣະເຈົ້າ. ດັ່ງນັ້ນ ເຈົ້າຈຶ່ງເປັນບຸດຂອງເຮົາ;
4 ແລະ ເຈົ້າ [ກ]ເປັນສຸກແລ້ວ ເພາະເຈົ້າ
ໄດ້ເຊື່ອ;
5 ແລະ ເຈົ້າຍິ່ງເປັນສຸກກວ່ານັ້ນ ເພາະ
ເຈົ້າຖືກ [ກ]ເອີ້ນໂດຍເຮົາໃຫ້ສັ່ງສອນພຣະ
ກິດຕິຄຸນຂອງເຮົາ—
6 ເພື່ອເປັ່ງສຽງຂອງເຈົ້າດັ່ງກັບສຽງແກ,
ທັງດົນນານ ແລະ ດັງ, ແລະ [ກ]ເອີ້ນການກັບ
ໃຈແກ່ລຸ້ນທີ່ຄົດໂກງ ແລະ ເສຍຄົນນີ້, ຕຽມ
ທາງຂອງພຣະຜູ້ເປັນເຈົ້າສຳລັບ [ຂ]ການສະ
ເດັດມາຄັ້ງທີສອງຂອງພຣະອົງ.
7 ເພາະຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ,
ເຮົາກ່າວກັບເຈົ້າ, [ກ]ເວລາໃກ້ຈະມາເຖິງ
ໃນບໍ່ຊ້ານີ້ ເມື່ອເຮົາຈະມາໃນ [ຂ]ເມກດ້ວຍ
ອຳນາດ ແລະ ລັດສະໝີພາບອັນຍິ່ງໃຫຍ່.
8 ແລະ ມັນຈະເປັນ [ກ]ວັນອັນຍິ່ງໃຫຍ່ໃນ
ເວລາແຫ່ງການມາຂອງເຮົາ, ເພາະທຸກປະ
ຊາຊາດຈະ [ຂ]ຕົວສັ່ນ.
9 ແຕ່ກ່ອນວັນອັນຍິ່ງໃຫຍ່ນັ້ນຈະມາເຖິງ
ດວງຕາເວັນຈະມືດດັບ, ແລະ ດວງເດືອນ
ຈະກັບເປັນເລືອດ, ແລະ ດວງດາວຈະບໍ່
ຍອມສ່ອງແສງ, ແລະ ດາວບາງໜ່ວຍຈະ
ຕົກລົງມາ, ແລະ ຄວາມພິນາດອັນຍິ່ງໃຫຍ່
ຈະຄອຍຖ້າຄົນຊົ່ວຢູ່.
10 ດັ່ງນັ້ນ, ຈົ່ງເປັ່ງສຽງຂອງເຈົ້າ ແລະ
ຢ່າ [ກ]ຍັບຍັ້ງມັນໄວ້, ເພາະອົງພຣະຜູ້ເປັນ
ເຈົ້າໄດ້ກ່າວ; ສະນັ້ນ ຈົ່ງທຳນາຍ, ແລະ ມັນ
ຈະຖືກມອບໃຫ້ໂດຍ [ຂ]ອຳນາດຂອງພຣະ
ວິນຍານບໍລິສຸດ.
11 ແລະ ຖ້າຫາກເຈົ້າຊື່ສັດ, ຈົ່ງເບິ່ງ, ເຮົາ
ຢູ່ນຳເຈົ້າຈົນກວ່າເຮົາຈະມາ—
12 ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ເຮົາມາຢ່າງໄວ. ເຮົາຄືພຣະ
ຜູ້ເປັນເຈົ້າຂອງເຈົ້າ ແລະ ພຣະຜູ້ໄຖ່ຂອງ
ເຈົ້າ. ແມ່ນເປັນດັ່ງນັ້ນ. ອາແມນ.

**34** 1 *ກ* ຄມພ ພະແຣັດ, ອໍສັນ.
2 *ກ* ຢຮ 1:1–5. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
3 *ກ* ຢຮ 3:16; 15:13. ຄມພ ຮັກ, ຄວາມຮັກ.
*ຂ* ຄມພ ພຣະຜູ້ໄຖ່.
*ຄ* ຄມພ ຊົດໃຊ້, ການຊົດໃຊ້; ໄຖ່, ການໄຖ່, ຖືກໄຖ່.
*ງ* ຢຮ 1:9–12; ຣມ 8:14, 16–17; ມຊ 6:64–68. ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
4 *ກ* ຢຮ 20:29.
5 *ກ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
6 *ກ* ຄພ 6:9.
*ຂ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
7 *ກ* ພນມ 1:3.
*ຂ* ລກ 21:27.
8 *ກ* ຢອ 2:11; ມລກ 4:5; ຄພ 43:17–26. ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
*ຂ* ອຊຢ 64:2.
10 *ກ* ອຊຢ 58:1.
*ຂ* 2 ປຕ 1:21.

# ພາກທີ 35

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ຢູ່ທີ່ ຫລື ໃກ້ ເມືອງເຟແອດ, ລັດນິວຢອກ, ວັນທີ 7 ເດືອນທັນວາ, 1830. ໃນຊ່ວງເວລານີ້, ສາດສະດາໄດ້ໃຊ້ເວລາເກືອບທຸກມື້ໃນການແປພຣະຄຣິສຕະທຳຄຳພີ. ການແປໄດ້ເລີ່ມຕົ້ນນັບແຕ່ເດືອນມິຖຸນາ 1830, ແລະ ທັງ ອໍລີເວີ ຄາວເດີຣີ ແລະ ຈອນ ວິດເມີ ໄດ້ຊ່ວຍເປັນຜູ້ຂຽນ. ບັດນີ້ ນັບຕັ້ງແຕ່ເຂົາເຈົ້າໄດ້ຖືກເອີ້ນໃຫ້ເຮັດໜ້າທີ່ອື່ນໆ, ຊິດນີ ຣິກດອນຈຶ່ງໄດ້ຖືກເອີ້ນໂດຍການມອບໝາຍຈາກສະຫວັນໃຫ້ຮັບໃຊ້ເປັນຜູ້ຂຽນໃຫ້ສາດສະດາໃນວຽກງານນີ້ (ເບິ່ງ ຂໍ້ທີ 20). ໃນບົດຄຳນຳຂອງການບັນທຶກຕໍ່ການເປີດເຜີຍນີ້, ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ: "ໃນເດືອນທັນວາ ຊິດນີ ຣິກດອນ ໄດ້ມາ [ຈາກລັດໂອໄຮໂອ] ເພື່ອທູນຖາມພຣະຜູ້ເປັນເຈົ້າ, ແລະ ເອດເວີດ ພາດທຣິດ ໄດ້ມາກັບລາວ. . . . ບໍ່ດົນຫລັງຈາກອ້າຍນ້ອງສອງຄົນນີ້ ໄດ້ມາເຖິງ, ພຣະຜູ້ເປັນເຈົ້າໄດ້ກ່າວໄວ້ດັ່ງນີ້."*

*1–2, ວິທີທີ່ມະນຸດຈະກາຍເປັນບຸດຂອງພຣະເຈົ້າ; 3–7, ຊິດນີ ຣິກດອນ ຖືກເອີ້ນໃຫ້ບັບຕິສະມາ ແລະ ມອບພຣະວິນຍານບໍລິສຸດ; 8–12, ເຄື່ອງໝາຍ ແລະ ສິ່ງມະຫັດສະຈັນເກີດຂຶ້ນໂດຍສັດທາ; 13–16, ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຈະຟາດປະຊາຊາດໂດຍອຳນາດຂອງພຣະວິນຍານ; 17–19, ໂຈເຊັບ ສະມິດ ຖືຂໍກະແຈແຫ່ງຄວາມລຶກລັບ; 20–21, ຜູ້ທີ່ຖືກເລືອກໄວ້ຈະຄົງຢູ່ໃນວັນແຫ່ງການສະເດັດມາຂອງພຣະຜູ້ເປັນເຈົ້າ; 22–27, ອິດສະຣາເອນຈະໄດ້ຮັບການຊ່ວຍໃຫ້ລອດ.*

1 ຈົ່ງ ຟັງ ສຸ ລະ ສຽງ ຂອງ [ກ]ພຣະ ຜູ້ ເປັນ
ເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ແມ່ນແຕ່
[ຂ]ອາລະຟາ ແລະ ໂອເມຄາ, ເປັນຕົ້ນ ແລະ
ທີ່ສຸດ, ຊຶ່ງ [ຄ]ວິທີທາງຂອງພຣະອົງເປັນໜຶ່ງ
ຮອບນິລັນດອນ, [ງ]ເໝືອນດັ່ງມື້ນີ້ດັ່ງມື້ວານ
ນີ້, ແລະ ຕະຫລອດການ.
2 ເຮົາ ຄື ພຣະ ເຢຊູ ຄຣິດ, ພຣະ ບຸດ ຂອງ
ພຣະເຈົ້າ, ຜູ້ຖືກ [ກ]ຄຶງເພື່ອບາບຂອງໂລກ,
ແມ່ນແຕ່ຫລາຍຕໍ່ຫລາຍຄົນທີ່ຈະ [ຂ]ເຊື່ອໃນ
ນາມຂອງເຮົາ, ເພື່ອວ່າພວກເຂົາຈະກາຍ
ເປັນ [ຄ]ບຸດຂອງພຣະເຈົ້າ, ແມ່ນແຕ່ເປັນ
[ງ]ອັນໜຶ່ງດຽວກັນໃນເຮົາ ດັ່ງເຮົາ [ຈ]ເປັນອັນ
ໜຶ່ງດຽວກັນໃນພຣະບິດາ, ດັ່ງພຣະບິດາ
ສະຖິດຢູ່ໃນເຮົາ, ເພື່ອວ່າພວກເຮົາຈະໄດ້
ເປັນອັນໜຶ່ງດຽວກັນ.
3 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບຜູ້ຮັບໃຊ້ຂອງເຮົາ ຊິດນີ, ເຮົາໄດ້
ຫລຽວເບິ່ງເຈົ້າ ແລະ ວຽກງານຂອງເຈົ້າ.
ເຮົາໄດ້ຍິນຄຳອະທິຖານຂອງເຈົ້າ, ແລະ
ໄດ້ຕຽມເຈົ້າສຳລັບວຽກງານທີ່ສຳຄັນກວ່າ.
4 ເຈົ້າເປັນສຸກແລ້ວ, ເພາະເຈົ້າຈະເຮັດ

**35** 1 *ກ* ຄມພ ພຣະຜູ້ເປັນເຈົ້າ.
*ຂ* ພນມ 1:8. ຄມພ ອາລະຟາ ແລະ ໂອເມຄາ.
*ຄ* 1 ນຟ 10:19; ຄພ 3:2.
*ງ* ຮຣ 13:8; ຄພ 38:1–4; 39:1–3.
2 *ກ* ຄມພ ຄຶງ, ການຄຶງ.
*ຂ* ຄພ 20:25; 45:5, 8.
*ຄ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
*ງ* ຢຮ 17:20–23. ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
*ຈ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.

ສິ່ງ ອັນ ຍິ່ງ ໃຫຍ່. ຈົ່ງ ເບິ່ງ ເຈົ້າ ໄດ້ ຖືກ ສົ່ງ ອອກ ໄປ, ແມ່ນ ແຕ່ ເໝືອນ ດັ່ງ [ກ]ໂຢຮັນ, ເພື່ອຕຽມທາງໄວ້ກ່ອນເຮົາ, ແລະ ກ່ອນ [ຂ]ເອລີຢາຜູ້ຈະມາ, ແລະ ເຈົ້າບໍ່ຮູ້ເລື່ອງນີ້ເລີຍ.

5 ເຈົ້າໄດ້ໃຫ້ບັບຕິສະມາໂດຍນ້ຳສູ່ການກັບໃຈ, ແຕ່ພວກເຂົາ [ກ]ບໍ່ໄດ້ຮັບພຣະວິນຍານບໍລິສຸດ;

6 ແຕ່ບັດນີ້ ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ເຈົ້າວ່າ ເຈົ້າຈະໃຫ້ [ກ]ບັບຕິສະມາໂດຍນ້ຳ, ແລະ ພວກເຂົາຈະໄດ້ຮັບ [ຂ]ພຣະວິນຍານບໍລິສຸດໂດຍການວາງ [ຄ]ມື, ແມ່ນແຕ່ເໝືອນດັ່ງອັກຄະສາວົກໃນສະໄໝບູຮານ.

7 ແລະ ເຫດການຈະບັງເກີດຂຶ້ນຄື ວຽກງານອັນຍິ່ງໃຫຍ່ຈະເກີດຂຶ້ນໃນແຜ່ນດິນ, ແມ່ນແຕ່ໃນບັນດາ [ກ]ຄົນຕ່າງຊາດ, ເພາະຄວາມໂງ່ຈ້າ ແລະ ຄວາມໜ້າກຽດຊັງຂອງພວກເຂົາຈະຖືກສະແດງໃຫ້ປະຈັກແກ່ສາຍຕາຂອງທຸກຜູ້ຄົນ.

8 ເພາະເຮົາຄືພຣະເຈົ້າ, ແລະ ແຂນຂອງເຮົາບໍ່ໄດ້ [ກ]ສັ້ນລົງ; ແລະ ເຮົາຈະສະແດງ [ຂ]ສິ່ງມະຫັດສະຈັນ, [ຄ]ເຄື່ອງໝາຍ, ແລະ ການແປກປະຫລາດ, ແກ່ທຸກຄົນຜູ້ [ງ]ເຊື່ອໃນນາມຂອງເຮົາ.

9 ແລະ ຜູ້ໃດກໍຕາມທີ່ຈະທູນຂໍສິ່ງນີ້ໃນນາມຂອງເຮົາດ້ວຍ [ກ]ສັດທາ, ເຂົາຈະ [ຂ]ຂັບໄລ່ [ຄ]ຜີສາງອອກໄປ; ເຂົາຈະ [ງ]ປິ່ນປົວຄົນເຈັບປ່ວຍ; ເຂົາຈະເຮັດໃຫ້ຄົນຕາບອດເຫັນຮຸ່ງ, ແລະ ຄົນຫູໜວກໃຫ້ໄດ້ຍິນ, ແລະ ຄົນປາກກືກຈະເວົ້າໄດ້, ແລະ ຄົນເປັນລ່ອຍຈະຍ່າງໄດ້.

10 ແລະ ເວລາຈະມາເຖິງຢ່າງວ່ອງໄວ ຊຶ່ງສິ່ງທີ່ຍິ່ງໃຫຍ່ຈະຖືກສະແດງໃຫ້ເຫັນແກ່ລູກຫລານມະນຸດ;

11 ແຕ່ [ກ]ປາດສະຈາກສັດທາ ຈະບໍ່ມີສິ່ງໃດຖືກສະແດງໃຫ້ເຫັນ ຍົກເວັ້ນແຕ່ [ຂ]ຄວາມເປົ່າປ່ຽວຢູ່ເທິງ [ຄ]ບາບີໂລນ, ຊຶ່ງນະຄອນດຽວນີ້ແຫລະທີ່ໄດ້ເຮັດໃຫ້ທຸກປະຊາຊາດດື່ມເຫລົ້າອະງຸ່ນແຫ່ງພຣະພິໂລດຈາກ [ງ]ການລ່ວງປະເວນີຂອງມັນ.

12 ແລະ [ກ]ບໍ່ມີຄົນໃດເຮັດຄວາມດີ ຍົກເວັ້ນແຕ່ຄົນເຫລົ່ານັ້ນທີ່ພ້ອມແລ້ວທີ່ຈະຮັບເອົາຄວາມສົມບູນແຫ່ງພຣະກິດຕິຄຸນຂອງເຮົາ, ຊຶ່ງເຮົາໄດ້ສົ່ງອອກໄປໃຫ້ຄົນລຸ້ນນີ້.

13 ດັ່ງນັ້ນ, ເຮົາຈຶ່ງເອີ້ນສິ່ງທີ່ [ກ]ອ່ອນແອຂອງໂລກ, ຄົນເຫລົ່ານັ້ນທີ່ [ຂ]ດ້ອຍການສຶກສາ ແລະ ຖືກກຽດຊັງ, ເພື່ອຟາດປະຊາຊາດໂດຍອຳນາດຂອງພຣະວິນຍານຂອງເຮົາ;

14 ແລະ ແຂນຂອງພວກເຂົາຈະເປັນແຂນຂອງເຮົາ, ແລະ ເຮົາຈະເປັນ [ກ]ເຄື່ອງປ້ອງກັນ ແລະ ເສື້ອຫຸ້ມເກາະຂອງພວກເຂົາ; ແລະ ເຮົາຈະຄາດແອວຂອງພວກເຂົາ, ແລະ ພວກເຂົາຈະຕໍ່ສູ້ຢ່າງລູກຜູ້ຊາຍ

4 ກ ມລກ 3:1; ມທ 11:10; 1 ນຟ 11:27; ຄພ 84:27–28.
ຂ 3 ນຟ 25:5–6; ຄພ 2:1; 110:13–15.
5 ກ ກຈກ 19:1–6.
6 ກ ຄນມພ ບັບຕິສະມາ, ໃຫ້ບັບຕິສະມາ.
ຂ ຄນມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
ຄ ຄນມພ ມື, ການວາງ.
7 ກ ຄນມພ ຄົນຕ່າງຊາດ.
8 ກ ອຊຢ 50:2; 59:1.
ຂ ຄນມພ ມະຫັດສະຈັນ, ການມະຫັດສະຈັນ.
ຄ ຄນມພ ເຄື່ອງໝາຍ.
ງ ຄນມພ ເຊື່ອ, ຄວາມເຊື່ອ.
9 ກ ຄນມພ ສັດທາ.
ຂ ມຣກ 16:17.
ຄ ມຣກ 1:21–45.
ງ ຄນມພ ປິ່ນປົວ, ການປິ່ນປົວ.
11 ກ ຄພ 63:11–12.
ຂ ຄພ 5:19–20.
ຄ ຄນມພ ບາເບນ, ບາບີໂລນ.
ງ ພນມ 18:2–4.
12 ກ ຣມ 3:10–12; ຄພ 33:4; 38:10–11; 84:49.
13 ກ 1 ກຣທ 1:27; ຄພ 1:19–23; 124:1.
ຂ ກຈກ 4:13.
14 ກ 2 ຊມອ 22:2–3.

ໃຫ້ເຮົາ; ແລະ ຂສັດຕູຂອງພວກເຂົາຈະຢູ່
ໃຕ້ຕີນຂອງພວກເຂົາ; ແລະ ເຮົາຈະເງືອດ
ດາບ ຄລົງຟັນແທນພວກເຂົາ, ແລະ ໂດຍ
ງໄຟແຫ່ງຄວາມເຄືອງແຄ້ນຂອງເຮົາ, ເຮົາ
ຈະຮັກສາພວກເຂົາ.
15 ແລະ ກຄົນຍາກຈົນ ແລະ ຂຄົນອ່ອນ
ໂຍນ ຈະມີພຣະກິດຕິຄຸນສັ່ງສອນໃຫ້ແກ່
ພວກເຂົາ, ແລະ ພວກເຂົາຈະ ຄລໍຄອຍ
ວັນເວລາແຫ່ງການມາຂອງເຮົາ, ເພາະມັນ
ງໃກ້ຈະມາເຖິງແລ້ວ—
16 ແລະ ພວກເຂົາຈະຮຽນຮູ້ຄຳອຸປະມາ
ເລື່ອງ ກຕົ້ນໝາກເດື່ອ, ເພາະແມ່ນແຕ່
ຕອນນີ້ ລະດູຮ້ອນໃກ້ຈະມາເຖິງແລ້ວ.
17 ແລະ ເຮົາໄດ້ສົ່ງ ກຄວາມສົມບູນແຫ່ງ
ພຣະກິດຕິຄຸນຂອງເຮົາອອກໄປໂດຍມື
ຂອງຜູ້ຮັບໃຊ້ຂອງເຮົາ ຂໂຈເຊັບ; ແລະ ໃນ
ຄວາມອ່ອນແອ ເຮົາໄດ້ປະທານພອນໃຫ້
ລາວ;
18 ແລະ ເຮົາໄດ້ມອບ ກຂໍກະແຈແຫ່ງ
ຄວາມລຶກລັບ ຂອງສິ່ງເຫລົ່ານັ້ນຊຶ່ງ ຂຜະ
ນຶກ ໄວ້ໃຫ້ແກ່ລາວ, ແມ່ນແຕ່ສິ່ງຊຶ່ງເປັນ
ຢູ່ນັບແຕ່ ຄການວາງຮາກຖານຂອງໂລກ,
ແລະ ສິ່ງຊຶ່ງຈະເກີດຂຶ້ນຈາກເວລານີ້ໄປ
ຈົນກວ່າ ເວລາແຫ່ງການມາຂອງເຮົາ, ຖ້າ
ຫາກລາວແນບສະໜິດຢູ່ໃນເຮົາ, ແລະ ຖ້າ
ຫາກບໍ່ເປັນເຊັ່ນນັ້ນ, ເຮົາຈະຕັ້ງຄົນໜຶ່ງຂຶ້ນ
ແທນລາວ.
19 ດັ່ງນັ້ນ, ຈົ່ງດູແລລາວ ເພື່ອວ່າສັດທາ
ຂອງລາວຈະບໍ່ສູນສິ້ນໄປ, ແລະ ມັນຈະຖືກ
ມອບໃຫ້ໂດຍ ກພຣະຜູ້ປອບໂຍນ, ຂພຣະ
ວິນຍານບໍລິສຸດ, ທີ່ຮູ້ທຸກສິ່ງ.
20 ແລະ ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້
ແກ່ເຈົ້າ—ວ່າເຈົ້າຈະ ກຂຽນໃຫ້ລາວ; ແລະ
ພຣະຄຳພີຈະຖືກມອບໃຫ້, ແມ່ນແຕ່ຄືກັບ
ວ່າ ມັນຢູ່ໃນຊວງເອິກຂອງເຮົາເອງ, ເພື່ອ
ຄວາມລອດຂອງຜູ້ທີ່ເຮົາ ຂເລືອກໄວ້ເອງ;
21 ເພາະພວກເຂົາຈະໄດ້ຍິນ ກສຽງຂອງ
ເຮົາ, ແລະ ຈະເຫັນເຮົາ, ແລະ ຈະບໍ່ນອນ
ຫລັບຢູ່, ແລະ ຈະ ຂຄອຍຢູ່ໃນວັນແຫ່ງການ
ຄມາຂອງເຮົາ; ເພາະພວກເຂົາຈະຖືກເຮັດ
ໃຫ້ບໍລິສຸດ, ແມ່ນແຕ່ເໝືອນດັ່ງທີ່ເຮົາ ງບໍລິ
ສຸດ.
22 ແລະ ບັດນີ້ ເຮົາກ່າວກັບ ກເຈົ້າວ່າ ຈົ່ງ
ຢູ່ກັບລາວ, ແລະ ລາວຈະເດີນທາງໄປກັບ
ເຈົ້າ; ຢ່າປະຖິ້ມລາວ, ແລະ ສິ່ງເຫລົ່ານີ້ຈະ
ສຳເລັດຢ່າງແນ່ນອນ.
23 ແລະ ກຕາບໃດທີ່ເຈົ້າບໍ່ໄດ້ຂຽນ, ຈົ່ງ
ເບິ່ງ, ມັນຈະຖືກມອບໃຫ້ແກ່ລາວເພື່ອທຳ

14 *ຂ* ຄພ 98:34–38.
*ຄ* ຄພ 1:13–14.
*ງ* ຄພ 128:24.
15 *ກ* ມທ 11:5.
*ຂ* ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
*ຄ* 2 ປຕ 3:10–13; ຄພ 39:23; 45:39; ມຊ 7:62.
*ງ* ຄພ 63:53.
16 *ກ* ມທ 24:32; ຄພ 45:36–38; ຈສ—ມ 1:38. ຄມພ ເຄື່ອງໝາຍແຫ່ງການເວລາ.
17 *ກ* ຄພ 42:12.
*ຂ* ຄພ 135:3.
18 *ກ* ຄພ 84:19.
*ຂ* ດນອ 12:9; ມທ 13:35; 2 ນຟ 27:10–11; ອທ 4:4–7; ຈສ—ປ 1:65.
*ຄ* ຄພ 128:18.
19 *ກ* ຢຮ 14:16, 26; 15:26. ຄມພ ພຣະຜູ້ປອບໂຍນ.
*ຂ* ຄມພ ພຣະວິນຍານບໍລິສຸດ.
20 *ກ* ໃນເວລານີ້ ສາດສະດາໄດ້ທຳການແປພຣະຄຣິສຕະທຳຄຳພີຈາກການເປີດເຜີຍ, ຊຶ່ງຊິດນີ ຣິກດອນ ໄດ້ຖືກເອີ້ນໃຫ້ເປັນຜູ້ຂຽນ.
*ຂ* ຄມພ ຖືກເລືອກ.
21 *ກ* ຢອ 2:11; ຄພ 43:17–25; 88:90; 133:50–51.
*ຂ* ມລກ 3:2–3.
*ຄ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
*ງ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
22 *ກ* ຄພ 100:9–11.
23 *ກ* ອສ ເມື່ອໃດກໍຕາມທີ່ຊິດນີ ຣິກດອນ ບໍ່ໄດ້ຫຍຸ້ງຢູ່ກັບການຂຽນ.

ນາຍ; ແລະ ເຈົ້າຈົ່ງສັ່ງສອນພຣະກິດຕິຄຸນ
ຂອງເຮົາ ແລະ ອ້າງເຖິງ [ຂ]ສາດສະດາຜູ້ບໍລິ
ສຸດເພື່ອພິສູດຖ້ອຍຄຳຂອງລາວ, ດັ່ງທີ່ມັນ
ຖືກມອບໃຫ້ແກ່ລາວ.

24 ຈົ່ງ [ກ]ຮັກສາບັນຍັດ ແລະ ພັນທະສັນ
ຍາທັງໝົດຊຶ່ງຜູກມັດເຈົ້າຢູ່; ແລະ ເຮົາຈະ
ເຮັດໃຫ້ຟ້າສະຫວັນ [ຂ]ສັ່ນສະເທືອນເພື່ອ
ຄວາມດີຂອງເຈົ້າ, ແລະ [ຄ]ຊາຕານຈະຕົວ
ສັ່ນ ແລະ ຊີໂອນຈະ [ງ]ປິຕິຍິນດີຢູ່ເທິງພູ
ແລະ ຈະເລີນຮຸ່ງເຮືອງ;

25 ແລະ [ກ]ອິດສະຣາເອນຈະ [ຂ]ລອດໃນ
ເວລາອັນເໝາະສົມຂອງເຮົາເອງ; ແລະ
ໂດຍ [ຄ]ຂໍກະແຈຊຶ່ງເຮົາໄດ້ມອບໃຫ້ ພວກ
ເຂົາຈະຖືກນຳພາໄປ, ແລະ ຈະບໍ່ມີຄວາມ
ສັບສົນໃນທາງໃດເລີຍ.

26 ຈົ່ງ ລຶ້ນ ເລີງ ແລະ ເບີກ ບານ ເຖີດ,
[ກ]ການໄຖ່ຂອງເຈົ້າໃກ້ຈະມາເຖິງແລ້ວ.

27 ຢ່າສູ່ຢ້ານ, ຝູງແກະນ້ອຍເອີຍ, [ກ]ອາ
ນາຈັກເປັນຂອງພວກເຈົ້າຈົນກວ່າເຮົາຈະ
ມາ. ຈົ່ງເບິ່ງ, ເຮົາ [ຂ]ມາຢ່າງໄວ. ແມ່ນເປັນ
ດັ່ງນັ້ນ. ອາແມນ.

# ພາກທີ 36

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ເອດເວີດ ພາດທຣິດ, ໃກ້ເມືອງເຟແອດ, ລັດນິວຢອກ, ວັນທີ 9 ເດືອນທັນວາ, 1830 (ເບິ່ງ ຫົວຂໍ້ຂອງ ພາກທີ 35). ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ ເອດເວີດ ພາດທຣິດ "ເປັນແບບແຜນຂອງຄົນທີ່ເຄັ່ງຄັດໃນທາງສາດສະໜາ, ແລະ ເປັນຊາຍທີ່ຍິ່ງໃຫຍ່ຄົນໜຶ່ງຂອງພຣະຜູ້ເປັນເຈົ້າ."*

*1–3, ພຣະຜູ້ເປັນເຈົ້າໄດ້ວາງພຣະຫັດຂອງພຣະອົງເທິງເອດເວີດ ພາດທຣິດ ໂດຍມືຂອງຊິດນີ ຣິກດອນ; 4–8, ຊາຍທຸກໆຄົນທີ່ໄດ້ຮັບພຣະກິດຕິຄຸນ ແລະ ຖານະປະໂລຫິດ ຈະຖືກເອີ້ນໃຫ້ອອກໄປ ແລະ ສັ່ງສອນ.*

1 ອົງພຣະຜູ້ເປັນເຈົ້າ, [ກ]ຜູ້ມີລິດທານຸ
ພາບຂອງອິດສະຣາເອນໄດ້ກ່າວດັ່ງນີ້: ຈົ່ງ
ເບິ່ງ, ເຮົາກ່າວກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາ
[ຂ]ເອດເວີດ, ວ່າເຈົ້າໄດ້ຮັບພອນແລ້ວ, ແລະ
ບາບຂອງເຈົ້າໄດ້ຖືກອະໄພໃຫ້ແລ້ວ, ແລະ
ເຈົ້າຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ
ຂອງເຮົາຄືກັບວ່າສຽງແກ;

2 ແລະ ເຮົາຈະວາງມືເທິງເຈົ້າ ໂດຍ [ກ]ມື
ຂອງຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ,
ແລະ ເຈົ້າຈະໄດ້ຮັບ ພຣະວິນຍານຂອງ
ເຮົາ, ພຣະວິນຍານບໍລິສຸດ, ແມ່ນແຕ່
[ຂ]ພຣະຜູ້ປອບໂຍນ, ຊຶ່ງຈະສິດສອນເຈົ້າ
ເຖິງສິ່ງທີ່ເປັນ [ຄ]ສັນຕິສຸກຂອງອານາຈັກ;

23 *ຂ* ອສ ພຣະຄຳພີ.
24 *ກ* ຄພ 103:7.
*ຂ* ຄພ 21:6.
*ຄ* 1 ນຟ 22:26.
*ງ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
25 *ກ* ຄມພ ອິດສະຣາເອນ.
*ຂ* ອຊຢ 45:17; 1 ນຟ 19:15–16; 22:12.
*ຄ* ຄມພ ຂໍກະແຈຂອງຖານະປະໂລຫິດ.
26 *ກ* ລກ 21:28.
27 *ກ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
*ຂ* ພນມ 22:20.
**36** 1 *ກ* ຄມພ ພຣະເຢຊູຄຣິດ; ເຢໂຮວາ.
*ຂ* ຄພ 41:9–11.
2 *ກ* ຄມພ ມື, ການວາງ.
*ຂ* ຄມພ ພຣະຜູ້ປອບໂຍນ; ພຣະວິນຍານບໍລິສຸດ.
*ຄ* ຄພ 42:61.

3 ແລະ ເຈົ້າຈະປະກາດມັນດ້ວຍສຽງດັງ,
ກ່າວວ່າ: ໂຮຊັນນາ, ຂໍພຣະນາມຂອງພຣະ
ເຈົ້າຜູ້ສູງສຸດຈົ່ງພຣະກະເສີມສຳລານເຖີດ.
4 ແລະ ບັດນີ້ ການເອີ້ນ ແລະ ບັນຍັດນີ້
ເຮົາມອບໃຫ້ແກ່ເຈົ້າ ແມ່ນກ່ຽວກັບມະນຸດ
ທັງປວງ—
5 ເພື່ອວ່າເມື່ອຫລາຍຕໍ່ຫລາຍຄົນທີ່ຈະ
ມາຫາຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ
ແລະ ໂຈເຊັບ ສະມິດ, ຜູ້ລູກ, ຮັບເອົາການ
ເອີ້ນ ແລະ ບັນຍັດນີ້, ແລ້ວຈະໄດ້ຮັບການ
[ກ]ແຕ່ງຕັ້ງ ແລະ ຖືກສົ່ງອອກໄປເພື່ອ [ຂ]ສັ່ງ
ສອນພຣະກິດຕິຄຸນອັນເປັນນິດໃນບັນດາ
ປະຊາຊາດ—
6 ໂດຍປະກາດການກັບໃຈ, ກ່າວວ່າ:
ຈົ່ງ [ກ]ຊ່ວຍຕົນເອງໃຫ້ລອດຈາກຄົນລຸ້ນທີ່
ຊົ່ວຮ້າຍນີ້, ແລະ ອອກມາຈາກໄຟ, ໂດຍ
ກຽດຊັງ ແມ່ນແຕ່ [ຂ]ອາພອນທີ່ດ່າງພ້ອຍ
ດ້ວຍເນື້ອໜັງ.
7 ແລະ ບັນຍັດຂໍ້ນີ້ຈະຖືກມອບໃຫ້ແກ່
ແອວເດີຂອງສາດສະໜາຈັກຂອງເຮົາ,
ເພື່ອວ່າຊາຍທຸກໆຄົນທີ່ຮັບເອົາມັນ ດ້ວຍ
ໃຈທີ່ເຫັນແກ່ພຣະອົງເທົ່ານັ້ນຈະໄດ້ຮັບ
ການແຕ່ງຕັ້ງ ແລະ ຖືກສົ່ງອອກໄປ, ແມ່ນ
ແຕ່ເໝືອນດັ່ງທີ່ເຮົາໄດ້ກ່າວໄວ້.
8 ເຮົາຄືພຣະເຢຊູຄຣິດ, ພຣະບຸດຂອງ
ພຣະເຈົ້າ; ດັ່ງນັ້ນ, ຈົ່ງຄາດແອວຂອງເຈົ້າ
ແລະ ເຮົາຈະມາຫາ [ກ]ພຣະວິຫານຂອງ
ເຮົາໂດຍໃນທັນໃດນັ້ນ. ແມ່ນເປັນດັ່ງນັ້ນ.
ອາແມນ.

## ພາກທີ 37

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ໃກ້ເມືອງເຟແອດ, ລັດນິວຢອກ, ເດືອນທັນວາ 1830. ໃນນີ້ພຣະບັນຍັດຂໍ້ທຳອິດໄດ້ຖືກມອບໃຫ້ກ່ຽວກັບການເຕົ້າໂຮມໃນຍຸກສະໄໝນີ້.*

*1–4, ໄພ່ພົນຂອງພຣະເຈົ້າຖືກເອີ້ນໃຫ້ໄປເຕົ້າໂຮມກັນຢູ່ລັດໂອໄຮໂອ.*

1 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ ເຮົາ
ເຫັນວ່າບໍ່ເໝາະສົມທີ່ພວກເຈົ້າຈະ [ກ]ແປ
ຕື່ມອີກ ຈົນກວ່າພວກເຈົ້າໄປເຖິງລັດໂອໄຮ
ໂອ, ແລະ ນີ້ເປັນເພາະສັດຕູຂອງພວກເຈົ້າ
ແລະ ເພື່ອເຫັນແກ່ພວກເຈົ້າ.
2 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ພວກເຈົ້າຈະບໍ່ໄປ ຈົນກວ່າພວກ
ເຈົ້າໄດ້ສັ່ງສອນພຣະກິດຕິຄຸນຂອງເຮົາ
ໃນຂົງເຂດນັ້ນກ່ອນ, ແລະ ໄດ້ເພີ່ມຄວາມ
ເຂັ້ມແຂງໃຫ້ສາດສະໜາຈັກບໍ່ວ່າບ່ອນໃດ
ກໍຕາມທີ່ມີຢູ່, ແລະ ໂດຍສະເພາະຢ່າງຍິ່ງ
ໃນເມືອງ [ກ]ໂຄນສະວຽວ; ເພາະ, ຈົ່ງເບິ່ງ,
ພວກເຂົາໄດ້ອະທິຖານຫາເຮົາດ້ວຍສັດທາ
ຢ່າງຫລວງຫລາຍ.
3 ແລະ ອີກເທື່ອໜຶ່ງ, ເຮົາມອບບັນຍັດ
ຂໍ້ໜຶ່ງໃຫ້ແກ່ສາດສະໜາຈັກ, ວ່າເຮົາເຫັນ
ສົມຄວນທີ່ພວກເຂົາຈະໄປເຕົ້າໂຮມກັນຢູ່

5 ກ ຄພ 63:57.
ຄມພ ແຕ່ງຕັ້ງ,
ການແຕ່ງຕັ້ງ.
ຂ ຄມພ ສັ່ງສອນ.
6 ກ ກຈກ 2:40.
ຂ ຢດ 1:23.
8 ກ ມລກ 3:1.
**37** 1 ກ ອສ ການແປພຣະຄຣິສຕະ
ທຳຄຳພີ ໄດ້ເລີ່ມຕົ້ນແລ້ວ.
2 ກ ຄພ 24:3; 26:1.

ລັດ [ກ]ໂອໄຮໂອ, ເພື່ອຕຽມສຳລັບເວລາທີ່ຜູ້ຮັບໃຊ້ຂອງເຮົາ ອໍລິເວີ ຄາວເດີຣີ ຈະກັບມາຫາພວກເຂົາ.

4 ຈົ່ງເບິ່ງ, ນີ້ຄືປັນຍາ, ແລະ ໃຫ້ມະນຸດທຸກຄົນ [ກ]ເລືອກເພື່ອຕົນເອງຈົນກວ່າເຮົາຈະມາ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 38

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຟແອດ, ລັດນິວຢອກ, ວັນທີ 2 ເດືອນມັງກອນ, 1831. ເຫດການນັ້ນໄດ້ເກີດຂຶ້ນໃນກອງປະຊຸມໃຫຍ່ຂອງສາດສະໜາຈັກ.*

*1–6, ພຣະຄຣິດໄດ້ສ້າງທຸກສິ່ງທັງປວງ; 7–8, ພຣະອົງຢູ່ໃນທ່າມກາງໄພ່ພົນຂອງພຣະອົງ, ຜູ້ຈະເຫັນພຣະອົງໃນບໍ່ຊ້າ; 9–12, ເນື້ອໜັງທັງປວງເສື່ອມໂຊມຢູ່ຕໍ່ພຣະພັກຂອງພຣະອົງ; 13–22, ພຣະອົງໄດ້ສະຫງວນແຜ່ນດິນແຫ່ງຄຳສັນຍາໄວ້ສຳລັບໄພ່ພົນຂອງພຣະອົງໃນການເວລາ ແລະ ໃນຊົ່ວນິລັນດອນ; 23–27, ໄພ່ພົນຂອງພຣະເຈົ້າຖືກບັນຊາໃຫ້ເປັນອັນໜຶ່ງດຽວກັນ ແລະ ນັບຖືກັນສັນອ້າຍນ້ອງ; 28–29, ມີການບອກລ່ວງໜ້າກ່ຽວກັບສົງຄາມ; 30–33, ໄພ່ພົນຂອງພຣະເຈົ້າຈະໄດ້ຮັບອຳນາດຈາກເບື້ອງບົນ ແລະ ຈະອອກໄປໃນບັນດາທຸກປະຊາຊາດ; 34–42, ສາດສະໜາຈັກໄດ້ຖືກບັນຊາໃຫ້ດູແລຄົນຍາກຈົນ ແລະ ຄົນຂັດສົນ ແລະ ໃຫ້ສະແຫວງຫາຄວາມຮັ່ງມີແຫ່ງຊົ່ວນິລັນດອນ.*

1 ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າໄດ້ກ່າວດັ່ງນີ້, ແມ່ນແຕ່ພຣະເຢຊູຄຣິດ, [ກ]ເຮົາເປັນຜູ້ຍິ່ງໃຫຍ່, ອາລະຟາ ແລະ ໂອເມຄາ, [ຂ]ເປັນຕົ້ນ ແລະ ທີ່ສຸດ, ຜູ້ດຽວກັນນັ້ນທີ່ຫລຽວເບິ່ງຄວາມກວ້າງໃຫຍ່ໄພສານຂອງຊົ່ວນິລັນດອນ, ແລະ [ຄ]ໄພ່ພົນເຊຣາຟີມແຫ່ງສະຫວັນທັງໝົດ, [ງ]ກ່ອນໂລກໄດ້ຖືກ [ຈ]ສ້າງຂຶ້ນ;

2 ຜູ້ດຽວກັນນັ້ນທີ່ [ກ]ຮູ້ທຸກສິ່ງ, ເພາະ [ຂ]ທຸກສິ່ງໄດ້ຢູ່ຕໍ່ໜ້າຕໍ່ຕາເຮົາ;

3 ເຮົາຄືຜູ້ດຽວກັນນັ້ນທີ່ກ່າວ, ແລະ ໂລກໄດ້ຖືກ [ກ]ສ້າງຂຶ້ນ, ແລະ ທຸກສິ່ງທັງປວງໄດ້ບັງເກີດຂຶ້ນໂດຍເຮົາ.

4 ເຮົາຄືຜູ້ດຽວກັນນັ້ນ ທີ່ໄດ້ເອົາເມືອງ [ກ]ຊີໂອນຂອງເອນົກເຂົ້າມາໄວ້ໃນຊວງເອິກຂອງເຮົາເອງ; ແລະ ຕາມຄວາມຈິງແລ້ວ, ເຮົາກ່າວວ່າ ແມ່ນແຕ່ຫລາຍຕໍ່ຫລາຍຄົນທີ່ [ຂ]ເຊື່ອໃນນາມຂອງເຮົາ, ເພາະເຮົາຄືພຣະຄຣິດ, ແລະ ໃນນາມຂອງເຮົາເອງ, ໂດຍຄຸນນະທຳຂອງ [ຄ]ເລືອດທີ່ເຮົາໄດ້

3 *ກ* ອສ ລັດໂອໄຮໂອ.
ຄພ 38:31–32.
4 *ກ* ຄມພ ອຳເພີໃຈ.
**38** 1 *ກ* ຄມພ ເຮົາເປັນ.
*ຂ* ພນມ 1:8.
*ຄ* ຄພ 45:1.
*ງ* ຄມພ ຊີວິດກ່ອນເກີດ.
*ຈ* ພສສ 90:2.
2 *ກ* ຄພ 88:41;
ມຊ 1:35.
ຄມພ ຮອບຮູ້ທຸກຢ່າງ.
*ຂ* ສພສ 5:21;
2 ນຟ 9:20.
3 *ກ* ພສສ 33:6–9.
ຄມພ ສ້າງ, ການສ້າງ.
4 *ກ* ປຈສ ປຖກ 14:25–40
(ພາກທ້ອຍທ້າຍ);
ຄພ 45:11–14; 76:66–67;
84:99–100;
ມຊ 7:18–21.
ຄມພ ຊີໂອນ.
*ຂ* ຄພ 20:25; 35:2; 45:3–5.
*ຄ* ຄມພ ຊົດໃຊ້, ການຊົດໃຊ້.

ຫລັ່ງ, ເຮົາໄດ້ອ້ອນວອນຕໍ່ພຣະບິດາແທນ
ເຂົາ.
5 ແຕ່ຈົ່ງເບິ່ງ, [ກ]ຄົນຊົ່ວຜູ້ທີ່ເຫລືອຢູ່ ເຮົາ
ໄດ້ລ່າມໄວ້ດ້ວຍ [ຂ]ໂສ້ແຫ່ງຄວາມມືດ ຈົນ
ກວ່າ [ຄ]ການພິພາກສາແຫ່ງວັນອັນຍິ່ງໃຫຍ່,
ຊຶ່ງຈະມາໃນທີ່ສຸດຂອງແຜ່ນດິນໂລກ;
6 ແລະ ແມ່ນ ແຕ່ ເຊັ່ນ ນັ້ນ ເຮົາ ຈະ ເຮັດ
ໃຫ້ ຄົນ ຊົ່ວ ຖືກ ລ່າມ ໄວ້, ຜູ້ທີ່ບໍ່ຍອມ ຟັງ
ສຽງຂອງເຮົາ ແຕ່ໄດ້ເຮັດໃຈແຂງກະດ້າງ,
ແລະ ວິບັດ, ວິບັດ, ວິບັດ, ຄືຊາຕາກຳຂອງ
ເຂົາ.
7 ແຕ່ ຈົ່ງ ເບິ່ງ, ຕາມ ຈິງ, ຕາມ ຈິງ ແລ້ວ,
ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ [ກ]ຕາ ເຮົາ ຈ້ອງ
ມອງ ພວກ ເຈົ້າ ຢູ່. ເຮົາ ຢູ່ ໃນ [ຂ]ທ່າມ ກາງ
ພວກເຈົ້າ ແລະ ພວກເຈົ້າບໍ່ສາມາດຫລຽວ
ເຫັນເຮົາ;
8 ແຕ່ ວັນ ນັ້ນ ຈະ ມາ ເຖິງ ໃນ ບໍ່ ດົນ ນີ້ ທີ່
ພວກເຈົ້າຈະໄດ້ [ກ]ເຫັນເຮົາ, ແລະ ຮູ້ວ່າເຮົາ
ດຳລົງຢູ່; ເພາະບໍ່ດົນມ່ານ ແຫ່ງຄວາມມືດ
ຈະຖືກສີກອອກ, ແລະ ຄົນທີ່ບໍ່ [ຂ]ບໍລິສຸດຈະ
[ຄ]ຄົງຢູ່ໃນວັນນັ້ນບໍ່ໄດ້.
9 ດັ່ງນັ້ນ, ຈົ່ງ ຄາດ ແອວ ຂອງ ພວກ ເຈົ້າ
ແລະ ຕຽມພ້ອມ. ຈົ່ງເບິ່ງ, [ກ]ອານາຈັກເປັນ
ຂອງພວກເຈົ້າ, ແລະ ສັດຕູຈະເອົາຊະນະບໍ່
ໄດ້.
10 ຕາມ ຄວາມ ຈິງ ເຮົາ ກ່າວ ກັບ ພວກ
ເຈົ້າ ວ່າ ພວກ ເຈົ້າ [ກ]ສະອາດ ແລ້ວ, ແຕ່ ບໍ່
ແມ່ນທັງໝົດ; ແລະ ບໍ່ມີຄົນອື່ນທີ່ເຮົາ [ຂ]ພໍ
ໃຈນຳຫລາຍກວ່າ;
11 ເພາະ [ກ]ເນື້ອໜັງທັງປວງເສື່ອມໂຊມ
ຢູ່ຕໍ່ໜ້າເຮົາ; ແລະ ອຳນາດແຫ່ງ [ຂ]ຄວາມ
ມືດ ແຜ່ ຂະ ຫຍາຍ ໄປ ທົ່ວ ແຜ່ນ ດິນ ໂລກ,
ໃນບັນດາລູກຫລານມະນຸດ, ຕໍ່ໜ້າໄພ່ພົນ
ຂອງສະຫວັນທັງໝົດ—
12 ຊຶ່ງເຮັດໃຫ້ຄວາມງຽບສະຫງັດຄອບ
ງຳ, ແລະ ຕະຫລອດຊົ່ວນິລັນດອນ [ກ]ເຈັບ
ປວດ, ແລະ [ຂ]ເຫລົ່າທູດພວມລໍຖ້າຄຳບັນ
ຊາອັນຍິ່ງໃຫຍ່ຢູ່ ທີ່ຈະ [ຄ]ເກັບກ່ຽວແຜ່ນ
ດິນໂລກ, ເພື່ອເຕົ້າໂຮມ [ງ]ເຂົ້ານົກໄວ້ເພື່ອ
[ຈ]ເຜົາ; ແລະ, ຈົ່ງເບິ່ງ, ສັດຕູໄດ້ເຕົ້າໂຮມຕົວ
ເຂົ້າກັນ.
13 ແລະ ບັດ ນີ້ ເຮົາ ສະແດງ ໃຫ້ ພວກ
ເຈົ້າເຫັນຄວາມລຶກລັບ, ສິ່ງທີ່ເຄີຍຖືກເກັບ
ໄວ້ໃນຫ້ອງລຶກລັບ, ເພື່ອຈະເຮັດໃຫ້ທຸກ
ສິ່ງເກີດຂຶ້ນ ແມ່ນແຕ່ [ກ]ຄວາມພິນາດຂອງ
ພວກເຈົ້າຕາມຄວາມສົມຄວນຂອງເວລາ,
ແລະ ພວກເຈົ້າບໍ່ຮູ້ມັນ;
14 ແຕ່ບັດນີ້ ເຮົາບອກໃຫ້ພວກເຈົ້າຮູ້
ສິ່ງນີ້, ແລະ ພວກເຈົ້າເປັນສຸກ ແລ້ວ, ບໍ່
ແມ່ນເພາະຄວາມຊົ່ວຮ້າຍຂອງພວກເຈົ້າ,
ທັງບໍ່ແມ່ນເພາະໃຈຂອງພວກເຈົ້າບໍ່ເຊື່ອ
ຖື; ເພາະຕາມຄວາມຈິງແລ້ວ ບາງຄົນໃນ
ພວກເຈົ້າເຮັດຄວາມຜິດຕໍ່ເຮົາ, ແຕ່ເຮົາຈະ
ເມດຕາຕໍ່ຄວາມອ່ອນແອຂອງພວກເຈົ້າ.

5 ກ ຄມພ ບໍ່ຊອບທຳ, ຄວາມບໍ່ຊອບທຳ.
ຂ 2 ປຕ 2:4; ຢດ 1:6. ຄມພ ນະລົກ.
ຄ ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
7 ກ ຄພ 1:1.
ຂ ຄພ 6:32; 29:5.
8 ກ ພນມ 22:4–5. ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຂ ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
ຄ ມລກ 3:2.
9 ກ ລກ 6:20. ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
10 ກ ຄມພ ສະອາດ ແລະ ບໍ່ສະອາດ.
ຂ ຄພ 1:30.
11 ກ ອຊຢ 1:3–4; ຄພ 33:4.
ຂ ມກ 3:6; ຄພ 112:23; ມຊ 7:61–62.
12 ກ ມຊ 7:41.
ຂ ຄພ 86:3–7.
ຄ ຄມພ ເກັບກ່ຽວ.
ງ ຄພ 88:94; 101:65–66.
ຈ ມທ 13:30.
13 ກ ຄພ 5:32–33.

15 ສະນັ້ນ, ພວກເຈົ້າຈົ່ງ [ກ]ເຂັ້ມແຂງນັບ
ແຕ່ນີ້ເປັນຕົ້ນໄປ; ຢ່າສູ່ [ຂ]ຢ້ານ, ເພາະ ອາ
ນາຈັກເປັນຂອງພວກເຈົ້າ.
16 ແລະ ເພື່ອຄວາມລອດຂອງພວກເຈົ້າ
ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າ,
ເພາະເຮົາໄດ້ຍິນຄຳອະທິຖານຂອງພວກ
ເຈົ້າ, ແລະ [ກ]ຄົນຍາກຈົນໄດ້ຈົ່ມຕໍ່ເຮົາ,
ແລະ [ຂ]ຄົນຮັ່ງມີເຮົາກໍໄດ້ສ້າງຂຶ້ນ, ແລະ
ເນື້ອໜັງທັງປວງເປັນຂອງເຮົາ, ແລະ ເຮົາ
ບໍ່ [ຄ]ເລືອກໜ້າຄົນ.
17 ແລະ ເຮົາໄດ້ເຮັດໃຫ້ແຜ່ນດິນໂລກອຸ
ດົມສົມບູນ, ແລະ ຈົ່ງເບິ່ງ ມັນເປັນ [ກ]ບ່ອນ
ຮອງຕີນຂອງເຮົາ, ດັ່ງນັ້ນ, ເຮົາຈະຢືນຢູ່
ເທິງທີ່ນັ້ນອີກເທື່ອໜຶ່ງ.
18 ແລະ ເຮົາໄດ້ສະເໜີ ແລະ ຍອມທີ່ຈະ
ມອບຄວາມຮັ່ງມີຫລາຍກວ່ານີ້ໃຫ້ແກ່ພວກ
ເຈົ້າ, ແມ່ນແຕ່ແຜ່ນດິນແຫ່ງຄຳສັນຍາ,
ແຜ່ນດິນທີ່ເຕັມໄປດ້ວຍນ້ຳນົມ ແລະ ນ້ຳ
ເຜິ້ງ, ຊຶ່ງເທິງນັ້ນຈະບໍ່ມີຄຳສາບແຊ່ງເມື່ອ
ພຣະຜູ້ເປັນເຈົ້າສະເດັດມາ;
19 ແລະ ເຮົາຈະມອບມັນໃຫ້ແກ່ພວກ
ເຈົ້າ ເປັນແຜ່ນດິນມູນມໍລະດົກຂອງພວກ
ເຈົ້າ, ຖ້າຫາກພວກເຈົ້າສະແຫວງຫາມັນ
ດ້ວຍສຸດໃຈຂອງພວກເຈົ້າ.
20 ແລະ ນີ້ຈະເປັນພັນທະສັນຍາຂອງ
ເຮົາກັບພວກເຈົ້າ, ພວກເຈົ້າຈະໄດ້ຮັບມັນ
ເປັນແຜ່ນດິນມູນມໍລະດົກຂອງພວກເຈົ້າ,
ແລະ ເປັນ [ກ]ມູນມໍລະດົກຂອງລູກຫລານ
ຂອງພວກເຈົ້າຕະຫລອດການ, ໃນຂະນະ
ທີ່ແຜ່ນດິນໂລກຍັງຕັ້ງຢູ່, ແລະ ພວກເຈົ້າ
ຈະໄດ້ຮັບມັນອີກໃນຊົ່ວນິລັນດອນ, ໂດຍບໍ່
ສູນສິ້ນອີກຕໍ່ໄປ.
21 ແຕ່, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ມື້ໜຶ່ງພວກເຈົ້າຈະບໍ່ມີ
ກະສັດ ຫລື ຜູ້ປົກຄອງ, ເພາະເຮົາຈະເປັນ
[ກ]ກະສັດຂອງພວກເຈົ້າ ແລະ ເຝົ້າດູແລ
ພວກເຈົ້າ.
22 ດັ່ງນັ້ນ, ຈົ່ງຟັງສຽງຂອງເຮົາ ແລະ
[ກ]ຕາມເຮົາມາ, ແລະ ພວກເຈົ້າຈະເປັນ
[ຂ]ຄົນອິດສະລະ, ແລະ ພວກເຈົ້າຈະບໍ່ມີກົດ
ນອກຈາກກົດຂອງເຮົາ ເມື່ອເຮົາມາ, ເພາະ
ເຮົາຄື [ຄ]ຜູ້ໃຫ້ກົດຂອງພວກເຈົ້າ, ແລະ
ແມ່ນຫຍັງຈະຢັບຢັ້ງມືຂອງເຮົາໄດ້?
23 ແຕ່, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ຈົ່ງ [ກ]ສິດສອນກັນແລະ
ກັນຕາມໜ້າທີ່ຊຶ່ງເຮົາໄດ້ແຕ່ງຕັ້ງພວກເຈົ້າ;
24 ແລະ ໃຫ້ທຸກໆຄົນ [ກ]ນັບຖືອ້າຍນ້ອງ
ຂອງຕົນເໝືອນດັ່ງຕົນເອງ, ແລະ ປະຕິບັດ
ດ້ວຍ [ຂ]ຄຸນນະທຳ ແລະ [ຄ]ຄວາມບໍລິສຸດຢູ່ຕໍ່
ໜ້າເຮົາ.
25 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າວ່າ ໃຫ້ທຸກໆຄົນນັບຖືອ້າຍນ້ອງຂອງ
ຕົນເໝືອນດັ່ງຕົນເອງ.
26 ເພາະຄົນໃດແດ່ໃນບັນດາພວກເຈົ້າ

---

15 *ກ* ຄມພ ກ້າຫານ, ຄວາມ ກ້າຫານ, ຢ່າງກ້າຫານ.
*ຂ* ຄມພ ຢ້ານກົວ, ຄວາມ ຢ້ານກົວ—ຄວາມ ຢ້ານກົວມະນຸດ.
16 *ກ* ມຊຍ 4:16–18.
*ຂ* 1 ຊມອ 2:7.
*ຄ* ກຈກ 10:34; ມຣນ 8:11–12; ຄພ 1:34–35.
17 *ກ* 1 ນຟ 17:39; ອຣຣ 2:7.
20 *ກ* ຄພ 45:58.
21 *ກ* ຊກຢ 14:9; 2 ນຟ 10:14; ແອວ 5:50.
22 *ກ* ຢຣ 10:27.
*ຂ* ຄມພ ພຣະເຢຊູຄຣິດ—ການປົກຄອງຂອງພຣະ ຄຣິດໃນລະຫວ່າງພັນປີ.
*ຄ* ອຊຢ 33:22; ມກ 4:2; ຄພ 45:59.
23 *ກ* ຄພ 88:77–79, 118, 122. ຄມພ ສອນ, ຜູ້ ສອນ, ຄູສອນ.
24 *ກ* ພບຍ 17:20; 1 ກຣທ 4:6.
*ຂ* ຄພ 46:33. ຄມພ ຄຸນນະທຳ.
*ຄ* ຄມພ ສັກສິດ, ຄວາມສັກສິດ.

ທີ່ມີລູກຊາຍສິບສອງຄົນ, ແລະ ບໍ່ໄດ້ເລືອກໜ້າພວກເຂົາ, ແລະ ພວກເຂົາກໍໄດ້ຮັບໃຊ້ລາວຢ່າງເຊື່ອຟັງ, ແລະ ລາວຈະເວົ້າກັບຄົນໜຶ່ງບໍວ່າ: ໃຫ້ລູກນຸ່ງຖືເສື້ອຜ້າຜືນງາມ ແລະ ໃຫ້ນັ່ງຢູ່ນີ້; ແລະ ກັບອີກຄົນໜຶ່ງວ່າ: ໃຫ້ເຈົ້ານຸ່ງເສື້ອຜ້າຂາດ ແລະ ນັ່ງຢູ່ບ່ອນນັ້ນ—ແລະ ຫລຽວເບິ່ງພວກລູກຊາຍ ແລະ ເວົ້າວ່າເຮົາຍຸດຕິທຳແລ້ວ?

27 ຈົ່ງເບິ່ງ, ເຮົາໄດ້ມອບສິ່ງນີ້ໃຫ້ພວກເຈົ້າເປັນຄຳອຸປະມາ, ແລະ ມັນເປັນເໝືອນດັ່ງທີ່ເຮົາເປັນ. ເຮົາກ່າວກັບພວກເຈົ້າວ່າ, ຈົ່ງເປັນອັນ [ກ]ໜຶ່ງດຽວກັນ; ແລະ ຖ້າຫາກພວກເຈົ້າບໍ່ເປັນອັນໜຶ່ງອັນດຽວກັນພວກເຈົ້າກໍບໍ່ແມ່ນຂອງເຮົາ.

28 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກເຈົ້າວ່າ ສັດຕູຢູ່ໃນຫ້ອງລຶກລັບສະແຫວງຫາທີ່ຈະເອົາ [ກ]ຊີວິດຂອງພວກເຈົ້າ.

29 ພວກເຈົ້າໄດ້ຍິນເລື່ອງ [ກ]ສົງຄາມຢູ່ໃນປະເທດໄກ, ແລະ ພວກເຈົ້າເວົ້າວ່າ ບໍ່ດົນຈະມີສົງຄາມໃຫຍ່ໃນປະເທດໄກ, ແຕ່ພວກເຈົ້າບໍ່ຮູ້ໃຈຂອງຄົນໃນແຜ່ນດິນຂອງຕົນເອງເລີຍ.

30 ເຮົາບອກສິ່ງນີ້ກັບພວກເຈົ້າ ເພາະຄຳອະທິຖານຂອງພວກເຈົ້າ; ດັ່ງນັ້ນ, ຈົ່ງ [ກ]ສະສົມ [ຂ]ປັນຍາໄວ້ໃນຊວງອົກຂອງພວກເຈົ້າ, ຖ້າບໍ່ດັ່ງນັ້ນ ຄວາມຊົ່ວຮ້າຍຂອງມະນຸດຈະເປີດເຜີຍເລື່ອງເຫລົ່ານີ້ແກ່ພວກເຈົ້າໂດຍຄວາມຊົ່ວຮ້າຍຂອງພວກເຂົາ, ໃນວິທີທີ່ຈະກ່າວເຂົ້າຫູຂອງພວກເຈົ້າດ້ວຍສຽງດັງກວ່າສຽງທີ່ຈະສັ່ນແຜ່ນດິນໂລກ; ແຕ່ ຖ້າຫາກພວກເຈົ້າຕຽມພ້ອມ ພວກເຈົ້າຈະບໍ່ຢ້ານກົວ.

31 ແລະ ເພື່ອພວກເຈົ້າຈະໄດ້ໜີພົ້ນອຳນາດຂອງສັດຕູ, ແລະ ເຕົ້າໂຮມເຂົ້າກັນເປັນຄົນຊອບທຳຂອງເຮົາ, ບໍ່ມີຂໍ້ຕຳນິ ແລະ [ກ]ມົນທິນ—

32 ດັ່ງນັ້ນ, ເພາະເຫດນີ້ ເຮົາຈຶ່ງມອບພຣະບັນຍັດໃຫ້ພວກເຈົ້າ ວ່າພວກເຈົ້າຄວນໄປຫາລັດ [ກ]ໂອໄຮໂອ; ແລະ ຢູ່ທີ່ນັ້ນເຮົາຈະມອບ [ຂ]ກົດຂອງເຮົາໃຫ້ພວກເຈົ້າ; ແລະ ຢູ່ທີ່ນັ້ນພວກເຈົ້າຈະໄດ້ [ຄ]ຮັບພອນດ້ວຍອຳນາດຈາກເບື້ອງບົນ;

33 ແລະ ຈາກທີ່ນັ້ນ, ຜູ້ໃດກໍຕາມທີ່ເຮົາປະສົງ ຈະ [ກ]ອອກໄປໃນບັນດາປະຊາຊາດທັງປວງ, ແລະ ເຂົາຈະຖືກບອກວ່າ ເຂົາຄວນເຮັດສິ່ງໃດ; ເພາະເຮົາມີວຽກງານອັນສຳຄັນທີ່ໄດ້ສະສົມໄວ້, ເພາະອິດສະຣາເອນຈະ [ຂ]ລອດ, ແລະ ເຮົາຈະນຳພາເຂົາໄປຫາບ່ອນໃດກໍຕາມທີ່ເຮົາປະສົງ, ແລະ ບໍ່ມີອຳນາດໃດທີ່ຈະ [ຄ]ຢັບຢັ້ງມືຂອງເຮົາໄດ້.

34 ແລະ ບັດນີ້, ເຮົາມອບບັນຍັດຂໍ້ໜຶ່ງໃຫ້ແກ່ສາດສະໜາຈັກໃນພາກສ່ວນນີ້, ຄືຜູ້ຊາຍບາງຄົນໃນບັນດາພວກເຂົາຈະໄດ້ຮັບການແຕ່ງຕັ້ງ, ແລະ ພວກເຂົາຈະໄດ້ຮັບການແຕ່ງຕັ້ງໂດຍ [ກ]ສຽງຂອງສາດສະໜາຈັກ;

35 ແລະ ພວກເຂົາຈະດູແລຄົນຍາກຈົນ ແລະ ຄົນຂັດສົນ, ແລະ ໃຫ້ຄວາມ

27 ກ ຢຮ 17:21–23;
1 ກຣທ 1:10;
ອຟຊ 4:11–14;
3 ນຟ 11:28–30;
ມຊ 7:18.
ຄນພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
28 ກ ຄພ 5:33; 38:13.
29 ກ ຄພ 45:26, 63; 87:1–5; 130:12.
30 ກ ຈສ—ມ 1:37.
ຂ ຄນພ ສະຕິປັນຍາ.
31 ກ 2 ປຕ 3:14.
32 ກ ຄພ 37:3.
ຂ ຄພ 42.
ຄ ລກ 24:49; ຄພ 39:15; 95:8; 110:9–10.
33 ກ ຄນພ ວຽກງານເຜີຍແຜ່.
ຂ ອຊຢ 45:17; ຢມຢ 30:10; ຄພ 136:22.
ຄ ດນອ 4:35.
34 ກ ຄນພ ເຫັນຊອບນຳກັນ.

ຊ່ວຍເຫລືອເພື່ອ [ກ]ບັນເທົາພວກເຂົາຈາກ
ຄວາມທຸກຍາກລຳບາກຂອງພວກເຂົາ;
ແລະ ສົ່ງພວກເຂົາໄປຫາບ່ອນຊຶ່ງເຮົາໄດ້
ບັນຊາພວກເຂົາ;
36 ແລະ ນີ້ຈະເປັນວຽກງານຂອງພວກ
ເຂົາ, ທີ່ຈະບໍລິຫານງານເນື່ອງດ້ວຍຊັບສິນ
ຂອງສາດສະໜາຈັກນີ້.
37 ແລະ ຜູ້ທີ່ມີໄຮ່ນາຊຶ່ງຂາຍບໍ່ໄດ້, ກໍໃຫ້
ເຂົາປະມັນໄປ ຫລື ໃຫ້ຄົນອື່ນເຊົ່າ ດັ່ງທີ່
ພວກເຂົາເຫັນວ່າດີ.
38 ຈົ່ງ ເບິ່ງ ວ່າ ທຸກ ສິ່ງ ຖືກ ປົກ ປັກ ຮັກ
ສາ; ແລະ ເມື່ອມະນຸດໄດ້ [ກ]ຮັບພອນດ້ວຍ
ອຳນາດຈາກເບື້ອງບົນ ແລະ ຖືກສົ່ງອອກ
ໄປ, ສິ່ງເຫລົ່ານີ້ທັງໝົດຈະຖືກຮວບຮວມ
ເຂົ້າໃນຊວງອົກຂອງສາດສະໜາຈັກ.
39 ແລະ ຖ້າຫາກພວກເຈົ້າສະແຫວງຫາ
[ກ]ຄວາມຮັ່ງມີ ຊຶ່ງມັນເປັນຕາມພຣະປະສົງ
ຂອງພຣະບິດາທີ່ຈະມອບໃຫ້ແກ່ພວກ
ເຈົ້າ, ແລ້ວພວກເຈົ້າຈະເປັນຄົນຮັ່ງມີທີ່ສຸດ
ຫລາຍກວ່າທຸກຄົນທັງປວງ, ເພາະພວກ
ເຈົ້າຈະມີ [ຂ]ຄວາມຮັ່ງມີແຫ່ງຊົ່ວນິລັນດອນ;
ແລະ ມັນຈຳເປັນວ່າ ຄວາມຮັ່ງມີຂອງແຜ່ນ
ດິນໂລກເປັນຂອງເຮົາທີ່ຈະມອບໃຫ້; ແຕ່
ຈົ່ງລະວັງ [ຄ]ຄວາມທະນົງຕົວ, ຖ້າບໍ່ດັ່ງນັ້ນ
ພວກເຈົ້າຈະກາຍເປັນເໝືອນດັ່ງ [ງ]ຊາວ
ນີໄຟໃນສະໄໝບູຮານ.
40 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ເຮົາມອບພຣະບັນຍັດຂໍ້ໜຶ່ງໃຫ້
ພວກເຈົ້າ, ວ່າມະນຸດທຸກຄົນ, ທັງແອວເດີ,
ປະໂລຫິດ, ຄູສອນ, ແລະ ສະມາຊິກນຳ
ອີກ, ຈົ່ງໄປດ້ວຍສຸດພະລັງຂອງຕົນ, ດ້ວຍ
ເຫື່ອແຮງຂອງ [ກ]ມືຕົນ, ເພື່ອຕຽມ ແລະ ບັນ
ລຸສິ່ງຊຶ່ງເຮົາໄດ້ບັນຊາ.
41 ແລະ ຈົ່ງ ໃຫ້ [ກ]ການ ສັ່ງ ສອນ ຂອງ
ພວກເຈົ້າເປັນສຽງ [ຂ]ເຕືອນ, ມະນຸດທຸກຄົນ
ເຕືອນເພື່ອນບ້ານຂອງຕົນ, ດ້ວຍຄວາມ
ນິ້ມນວນ ແລະ ດ້ວຍຄວາມອ່ອນໂຍນ.
42 ແລະ ພວກເຈົ້າຈົ່ງ [ກ]ອອກໄປຈາກ
ບັນດາຄົນຊົ່ວ. ຈົ່ງຊ່ວຍຕົວເອງໃຫ້ລອດ.
ເຈົ້າທີ່ຖືພາຊະນະຂອງພຣະຜູ້ເປັນເຈົ້າຈົ່ງ
ຮັກສາຕົວໃຫ້ສະອາດ. ແມ່ນເປັນດັ່ງນັ້ນ.
ອາແມນ.

## ພາກທີ 39

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ເຈມສ໌ ໂຄແວວ ທີ່ເມືອງເຟແອດ, ລັດນິວຢອກ, ວັນທີ 5 ເດືອນມັງກອນ, 1831. ເຈມສ໌ ໂຄແວວ, ຜູ້ໄດ້ເປັນຄູນພໍ່ຂອງສາດສະໜາຈັກເມໂທດິສໄດ້ປະມານສີ່ສິບປີ, ໄດ້ເຮັດພັນທະສັນຍາກັບພຣະຜູ້ເປັນເຈົ້າວ່າ ລາວຈະເຊື່ອຟັງຄຳບັນຊາທັງໝົດທີ່ພຣະຜູ້ເປັນເຈົ້າຈະມອບໃຫ້ແກ່ລາວຜ່ານໂຈເຊັບ ຜູ້ເປັນສາດສະດາ.*

*1–4, ໄພ່ພົນຂອງພຣະເຈົ້າມີຄວາມສາມາດທີ່ຈະກາຍເປັນບຸດຂອງພຣະເຈົ້າ; 5–6, ການຍອມຮັບເອົາພຣະກິດຕິຄຸນຄືການຍອມຮັບເອົາພຣະຄຣິດ; 7–14, ເຈມສ໌*

35 *ກ* ຄມພ ຄວາມຜາສຸກ.
38 *ກ* ຄມພ ຂອງປະທານສັກສິດ.
39 *ກ* ຢຄ 2:17–19;
ຄພ 11:7.
*ຂ* ຣກ 2:8.
*ຄ* ຄມພ ຈອງຫອງ,
ຄວາມຈອງຫອງ.
*ງ* ມຣນ 8:27.
40 *ກ* 1 ກຣທ 4:12.
41 *ກ* ຄມພ ສັ່ງສອນ.
*ຂ* ຄມພ ເຕືອນ, ຄຳເຕືອນ.
42 *ກ* ອຊຢ 52:11.

*ໂຄແວວ ໄດ້ຖືກບັນຊາໃຫ້ຮັບບັບຕິສະມາ ແລະ ອອກແຮງຢູ່ໃນສວນອະງຸ່ນຂອງພຣະຜູ້ເປັນເຈົ້າ; 15–21, ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຕ້ອງສັ່ງສອນພຣະກິດຕິຄຸນກ່ອນການສະເດັດມາຄັ້ງທີສອງ; 22–24, ຜູ້ທີ່ໄດ້ຮັບພຣະກິດຕິຄຸນຈະຖືກເຕົ້າໂຮມເຂົ້າກັນໃນການເວລາ ແລະ ໃນຊົ່ວນິລັນດອນ.*

1 ຈົ່ງເຊື່ອຟັງ ແລະ ຟັງສຽງຂອງພຣະອົງ
ຜູ້ດຳລົງຢູ່ຈາກຕະຫລອດ [ກ]ຊົ່ວນິລັນດອນ
ເຖິງຕະຫລອດຊົ່ວນິລັນດອນ, [ຂ]ເຮົາເປັນຜູ້
ຍິ່ງໃຫຍ່, ແມ່ນແຕ່ພຣະເຢຊູຄຣິດ—
2 [ກ]ຄວາມສະຫວ່າງ ແລະ ຊີວິດຂອງ
ໂລກ; ຄວາມສະຫວ່າງຊຶ່ງສ່ອງແສງຢູ່ໃນ
ຄວາມມືດ ແລະ ຄວາມມືດບໍ່ເຂົ້າໃຈມັນ
ເລີຍ;
3 ຜູ້ດຽວກັນນັ້ນ ຊຶ່ງໄດ້ສະເດັດມາຫາຜູ້
ຄົນຂອງເຮົາໃນ [ກ]ເວລາອັນຮຸ່ງໂລດ, ແລະ
ຜູ້ຄົນຂອງເຮົາບໍ່ໄດ້ຮັບເອົາເຮົາ;
4 ແຕ່ກັບຫລາຍຕໍ່ຫລາຍຄົນທີ່ໄດ້ຮັບ
ເອົາເຮົາ, ເຮົາຈະມອບຄວາມສາມາດໃຫ້
ເພື່ອຈະກາຍເປັນ [ກ]ບຸດຂອງເຮົາ; ແລະ
ແມ່ນແຕ່ເປັນເຊັ່ນນັ້ນທີ່ເຮົາຈະມອບໃຫ້
ຫລາຍຕໍ່ຫລາຍຄົນທີ່ຈະຮັບເອົາເຮົາ,
ຄວາມສາມາດທີ່ຈະກາຍເປັນບຸດຂອງເຮົາ.
5 ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າ, ຄົນທີ່ຮັບເອົາພຣະກິດຕິຄຸນຂອງ
ເຮົາ ໄດ້ [ກ]ຮັບເອົາເຮົາ; ແລະ ຄົນທີ່ບໍ່ໄດ້ຮັບ
ເອົາພຣະກິດຕິຄຸນຂອງເຮົາ ບໍ່ໄດ້ຮັບເອົາ
ເຮົາ.
6 ແລະ ນີ້ຄື [ກ]ພຣະກິດຕິຄຸນຂອງເຮົາ—
ການກັບໃຈ ແລະ ບັບຕິສະມາດ້ວຍນ້ຳ,
ແລະ ຈາກນັ້ນ [ຂ]ການບັບຕິສະມາດ້ວຍ
ໄຟ ແລະ ດ້ວຍພຣະວິນຍານບໍລິສຸດຈະມາ
ເຖິງ, ແມ່ນແຕ່ພຣະຜູ້ປອບໂຍນ, ຊຶ່ງຈະ
ສະແດງທຸກສິ່ງ, ແລະ [ຄ]ສິດສອນສິ່ງທີ່ເປັນ
ສັນຕິສຸກຂອງອານາຈັກ.
7 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ,
ຜູ້ຮັບໃຊ້ຂອງເຮົາ [ກ]ເຈມສ໌, ເຮົາໄດ້ເບິ່ງວຽກ
ງານຂອງເຈົ້າ ແລະ ເຮົາຮູ້ຈັກເຈົ້າ.
8 ແລະ ຕາມຄວາມຈິງ ເຮົາກ່າວກັບເຈົ້າ
ວ່າ, ບັດນີ້ ຫົວໃຈຂອງເຈົ້າຖືກຕ້ອງຕໍ່ເຮົາ
ໃນເວລານີ້; ແລະ, ຈົ່ງເບິ່ງ, ເຮົາໄດ້ມອບ
ພອນອັນຍິ່ງໃຫຍ່ໄວ້ເທິງຫົວຂອງເຈົ້າ;
9 ເຖິງຢ່າງໃດກໍຕາມ, ເຈົ້າເຄີຍເຫັນ
ຄວາມໂສກເສົ້າອັນໃຫຍ່ຫລວງມາຫລາຍ
ແລ້ວ, ເພາະເຈົ້າໄດ້ປະຕິເສດເຮົາຫລາຍ
ເທື່ອ ເພາະຄວາມທະນົງຕົວ ແລະ ຄວາມ
ເປັນຫ່ວງສິ່ງທາງ [ກ]ໂລກ.
10 ແຕ່, ຈົ່ງເບິ່ງ, ວັນເວລາແຫ່ງການປົດ
ປ່ອຍຂອງເຈົ້າໄດ້ມາເຖິງແລ້ວ, ຖ້າຫາກ
ເຈົ້າຈະເຊື່ອຟັງສຽງຂອງເຮົາ, ຊຶ່ງກ່າວກັບ
ເຈົ້າວ່າ: ຈົ່ງລຸກຂຶ້ນ ແລະ ຮັບ [ກ]ບັບຕິສະມາ,
ແລະ ລ້າງບາບຂອງເຈົ້າເສຍ, ໂດຍເອີ້ນ
ຫານາມຂອງເຮົາ, ແລ້ວເຈົ້າຈະໄດ້ຮັບ
ພຣະວິນຍານຂອງເຮົາ, ແລະ ພອນອັນຍິ່ງ
ໃຫຍ່ທີ່ສຸດຢ່າງທີ່ເຈົ້າບໍ່ເຄີຍຮູ້ມາກ່ອນ.
11 ແລະ ຖ້າຫາກເຈົ້າເຮັດເຊັ່ນນີ້, ເຮົາ

**39** 1 *ກ* ຮຣ 13:8; ຄພ 20:12; 35:1; 38:1–4.
*ຂ* ອພຍ 3:14. ຄມພ ເຢໂຮວາ.
2 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
3 *ກ* ຄພ 20:26; ມຊ 6:57, 62.
4 *ກ* ຢຮ 1:12. ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
5 *ກ* ຢຮ 13:20.
6 *ກ* ຄມພ ກັບໃຈ, ການກັບໃຈ; ບັບຕິສະມາ, ໃຫ້ບັບຕິສະມາ; ພຣະກິດຕິຄຸນ.
*ຂ* ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ; ພຣະວິນຍານບໍລິສຸດ.
*ຄ* ຄພ 42:61.
7 *ກ* ຄພ 40:1.
9 *ກ* ມທ 13:22.
10 *ກ* ຄພ 40. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.

ໄດ້ຕຽມເຈົ້າໄວ້ສຳລັບວຽກງານອັນຍິ່ງໃຫຍ່
ກວ່າ. ເຈົ້າຈະສັ່ງສອນ ຄວາມສົມບູນແຫ່ງ
ພຣະກິດຕິຄຸນ ຂອງ ເຮົາ, ຊຶ່ງເຮົາ ໄດ້ ສົ່ງ
ອອກໄປໃນຍຸກສຸດທ້າຍນີ້, ພັນທະສັນຍາ
ຊຶ່ງເຮົາໄດ້ສົ່ງອອກໄປ ເພື່ອ [ກ]ກູ້ຜູ້ຄົນຂອງ
ເຮົາ, ຜູ້ເປັນເຊື້ອສາຍອິດສະຣາເອນ.

12 ແລະ ເຫດ ການ ຈະ ບັງ ເກີດ ຂຶ້ນ
ຄື ອຳນາດນັ້ນຈະ [ກ]ຢູ່ກັບເຈົ້າ; ເຈົ້າຈະມີ
ສັດທາອັນຍິ່ງໃຫຍ່, ແລະ ເຮົາຈະຢູ່ກັບເຈົ້າ
ແລະ ອອກໜ້າເຈົ້າ.

13 ເຈົ້າ ຖືກ ເອີ້ນ ໃຫ້ [ກ]ອອກ ແຮງ ຢູ່ ໃນ
ສວນອະງຸ່ນຂອງເຮົາ, ແລະ ໃຫ້ເສີມສ້າງ
ສາດ ສະ ໜາ ຈັກ ຂອງ ເຮົາ, ແລະ [ຂ]ນຳ
ຊີໂອນອອກມາ, ເພື່ອວ່າມັນຈະປິຕິຍິນດີຢູ່
ເທິງຄ້ອຍພູ ແລະ [ຄ]ຈະເລີນຮຸ່ງເຮືອງ.

14 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ເຈົ້າບໍ່ໄດ້ຖືກເອີ້ນໃຫ້ໄປຫາ
ດິນແດນທາງພາກຕາເວັນອອກ, ແຕ່ເຈົ້າ
ຖືກເອີ້ນໃຫ້ໄປຫາລັດໂອໄຮໂອ.

15 ແລະ ຕາບ ໃດ ທີ່ ຜູ້ຄົນຂອງເຮົາຈະ
ເຕົ້າໂຮມກັນຢູ່ທີ່ລັດໂອໄຮໂອ, ເຮົາໄດ້ຮັກ
ສາ [ກ]ພອນທີ່ບໍ່ເຄີຍຮູ້ມາກ່ອນໃນບັນດາລູກ
ຫລານມະນຸດໄວ້, ແລະ ມັນຈະຖືກຖອກເທ
ລົງມາເທິງຫົວຂອງພວກເຂົາ. ແລະ ຈາກ
ນັ້ນມະນຸດຈະອອກໄປສູ່ [ຂ]ປະຊາຊາດ [ຄ]ທັງ
ປວງ.

16 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວ ກັບ ເຈົ້າ, ວ່າຜູ້ຄົນ ໃນ ລັດ ໂອ ໄຮ ໂອ
ໄດ້ ເອີ້ນ ຫາ ເຮົາ ດ້ວຍ ສັດທາ ຢ່າງ ຫລວງ
ຫລາຍ, ໂດຍຄິດວ່າເຮົາຈະຢັບຢັ້ງມືຂອງ
ເຮົາ ໃນການພິພາກສາປະຊາຊາດ, ແຕ່
ເຮົາຈະປະຕິເສດຄຳຂອງເຮົາບໍ່ໄດ້.

17 ດັ່ງນັ້ນ ຈົ່ງອອກ ແຮງຈົນສຸດພະລັງ
ຂອງເຈົ້າ ແລະ ເອີ້ນຄົນງານທີ່ຊື່ສັດໃຫ້ເຂົ້າ
ໄປໃນສວນອະງຸ່ນຂອງເຮົາ, ເພື່ອມັນຈະ
ຖືກ [ກ]ລິ່ງາເປັນເທື່ອສຸດທ້າຍ.

18 ແລະ ຕາບ ໃດ ທີ່ ພວກ ເຂົາກັບ ໃຈ
ແລະ ຮັບເອົາຄວາມສົມບູນແຫ່ງພຣະກິດຕິ
ຄຸນຂອງເຮົາ, ແລະ ໄດ້ຮັບການຊຳລະໃຫ້
ບໍລິສຸດ, ແລ້ວເຮົາຈະຢັບຢັ້ງມືຂອງເຮົາໃນ
[ກ]ການພິພາກສາ.

19 ດັ່ງນັ້ນ, ຈົ່ງອອກໄປ, ປ່າວປະກາດ
ດ້ວຍສຽງດັງ, ກ່າວວ່າ: ອານາຈັກສະຫວັນ
ໃກ້ເຂົ້າມາເຖິງແລ້ວ; ປະກາດວ່າ: ໂຮຊັນ
ນາ! ຂໍພຣະນາມຂອງພຣະເຈົ້າຜູ້ສູງສຸດຈົ່ງ
ພຣະກະເສີມສຳລານເຖີດ.

20 ຈົ່ງ ອອ ກ ໄປ ບັບຕິ ສະມາ ດ້ວຍ ນ້ຳ,
ໂດຍການຕຽມທາງໄວ້ຕໍ່ໜ້າເຮົາສຳລັບ
ເວລາຂອງ [ກ]ການມາຂອງເຮົາ;

21 ເພາະເວລາໃກ້ເຂົ້າມາເຖິງແລ້ວ; [ກ]ມື້
ໃດ ຫລື ຊົ່ວໂມງໃດນັ້ນບໍ່ມີຄົນໃດ [ຂ]ຮູ້; ແຕ່
ມັນຈະມາເຖິງຢ່າງແນ່ນອນ.

22 ແລະ ຄົນທີ່ຮັບເອົາສິ່ງເຫລົ່ານີ້ ກໍຮັບ
ເອົາເຮົາ; ແລະ ພວກເຂົາຈະຖືກເຕົ້າໂຮມ
ໄວ້ໃຫ້ເຮົາໃນການເວລາ ແລະ ໃນຊົ່ວນິ
ລັນດອນ.

23 ແລະ ອີກເທື່ອໜຶ່ງ, ເຫດການຈະບັງ
ເກີດຂຶ້ນຄື ຫລາຍຕໍ່ຫລາຍຄົນທີ່ເຈົ້າຈະໃຫ້
ບັບຕິສະມາດ້ວຍນ້ຳ, ເຈົ້າຈະວາງ [ກ]ມືຂອງ
ເຈົ້າໃສ່, ແລະ ພວກເຂົາຈະໄດ້ຮັບ [ຂ]ຂອງ

11 ກ ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
12 ກ 2 ກຣທ 12:9.
13 ກ ມທ 20:1–16.
ຂ ອຊຢ 52:8.
ຄ ຄພ 117:7.
15 ກ ຄພ 38:32; 95:8; 110:8–10.
ຂ ຄມພ ວຽກງານເຜີຍແຜ່.
ຄ ຄພ 1:2.
17 ກ ຢຄ 5:61–75; ຄພ 24:19.
18 ກ ຄມພ ພຣະເຢຊູຄຣິດ—ພິພາກສາ.
20 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
21 ກ ມທ 24:36.
ຂ ຈສ—ມ 1:40.
23 ກ ຄມພ ມື, ການວາງ.
ຂ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.

ປະທານ ແຫ່ງພຣະວິນຍານບໍລິສຸດ, ແລະ ຈະ [ຄ]ເຝົ້າລໍຄອຍເຄື່ອງໝາຍຂອງ [ງ]ການມາ ຂອງເຮົາ, ແລະ ຈະຮູ້ຈັກເຮົາ.

24 ຈົ່ງເບິ່ງ, ເຮົາມາຢ່າງໄວ. ແມ່ນເປັນ ດັ່ງນັ້ນ. ອາແມນ.

## ພາກທີ 40

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ທີ່ ເມືອງເຟແອດ, ລັດນິວຢອກ, ວັນທີ 6 ເດືອນມັງກອນ, 1831. ກ່ອນບັນທຶກການເປີດເຜີຍ ນີ້, ປະຫວັດຂອງສາດສະດາ ກ່າວວ່າ, "ເພາະເຈມສ໌ [ໂຄແວວ] ໄດ້ປະຕິເສດພຣະຄຳຂອງ ພຣະຜູ້ເປັນເຈົ້າ, ແລະ ໄດ້ກັບຄືນໄປຫາຫລັກທຳ ແລະ ຜູ້ຄົນເກົ່າຂອງລາວ, ພຣະຜູ້ເປັນ ເຈົ້າຈຶ່ງໄດ້ມອບການເປີດເຜີຍດັ່ງຕໍ່ໄປນີ້ໃຫ້ແກ່ຂ້າພະເຈົ້າ ແລະ ຊິດນີ ຣິກດອນ" (ເບິ່ງ ພາກທີ 39).*

*1–3, ຄວາມ ຢ້ານ ກົວ ການ ຂົ່ມ ເຫັງ ແລະ ຄວາມເປັນຫ່ວງສິ່ງທາງໂລກເຮັດໃຫ້ປະຕິ ເສດພຣະກິດຕິຄຸນ.*

1 ຈົ່ງ ເບິ່ງ, ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວກັບເຈົ້າວ່າ ຫົວໃຈຂອງຜູ້ຮັບໃຊ້ຂອງ ເຮົາ [ກ]ເຈມສ໌ ໂຄແວວ ເຄີຍຖືກຕ້ອງຕໍ່ເຮົາ, ເພາະລາວໄດ້ເຮັດພັນທະສັນຍາກັບເຮົາ ວ່າ ລາວຈະເຊື່ອຟັງຄຳຂອງເຮົາ.

2 ແລະ ລາວໄດ້ [ກ]ຮັບຄຳດ້ວຍຄວາມຍິນ ດີ, ແຕ່ຊາຕານໄດ້ລໍ້ລວງລາວທັນທີ; ແລະ ຄວາມຢ້ານກົວ [ຂ]ການຂົ່ມເຫັງ ແລະ ຄວາມ ເປັນຫ່ວງສິ່ງທາງໂລກເຮັດໃຫ້ລາວ [ຄ]ປະຕິ ເສດພຣະຄຳ.

3 ດັ່ງນັ້ນ ລາວຈຶ່ງໄດ້ຝ່າຝືນພັນທະສັນ ຍາ, ແລະ ມັນຂຶ້ນກັບເຮົາທີ່ຈະຈັດການກັບ ລາວຕາມທີ່ເຮົາເຫັນວ່າດີ. ອາແມນ.

## ພາກທີ 41

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ສາດສະໜາຈັກ, ທີ່ ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 4 ເດືອນກຸມພາ, 1831. ການເປີດເຜີຍນີ້ ແນະນຳ ສາດສະດາ ແລະ ພວກແອວເດີຂອງສາດສະໜາຈັກ ໃຫ້ອະທິຖານ ເພື່ອຈະໄດ້ຮັບ "ກົດ" ຂອງພຣະເຈົ້າ (ເບິ່ງ ພາກທີ 42). ໂຈເຊັບ ສະມິດ ຫາກໍໄດ້ມາເຖິງເມືອງເຄີດແລນ ຈາກລັດ ນິວຢອກ, ແລະ ລີມັນ ຄອບລີ, ສະມາຊິກຄົນໜຶ່ງຂອງສາດສະໜາຈັກ ທີ່ອາໄສຢູ່ໃກ້ເມືອງ ທອມສັນ, ລັດໂອໄຮໂອ, "ໄດ້ຮຽກຮ້ອງໃຫ້ບຣາເດີ ໂຈເຊັບ ແລະ ຊິດນີ [ຣິກດອນ] . . . ອາ*

23 *ຄ* ພນມ 3:3; ຄພ 35:15; 45:39–44.
*ງ* 2 ປຕ 3:10–14.
**40** 1 *ກ* ຄພ 39:7–11.
2 *ກ* ມຣກ 4:16–19.
*ຂ* ມທ 13:20–22. ຄມພ ຂົ່ມເຫັງ, ການຂົ່ມເຫັງ.
*ຄ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.

*ໄສຢູ່ກັບລາວ ແລະ ລາວຈະຈັດຫາທີ່ພັກອາໄສ ແລະ ສະບຽງອາຫານໃຫ້.” ການເປີດເຜີຍດັ່ງຕໍ່ໄປນີ້ ໃຫ້ຄວາມແຈ່ມແຈ້ງ ເຖິງບ່ອນທີ່ໂຈເຊັບ ແລະ ຊິດນີ ຄວນອາໄສຢູ່ ແລະ ໄດ້ເອີ້ນເອດເວີດ ພາດທຣິດ ໃຫ້ເປັນອະທິການຄົນທຳອິດຂອງສາດສະໜາຈັກ.*

*1–3, ພວກແອວເດີຈະປົກຄອງສາດສະໜາຈັກໂດຍພຣະວິນຍານແຫ່ງການເປີດເຜີຍ; 4–6, ສານຸສິດທີ່ແທ້ຈິງຈະໄດ້ຮັບ ແລະ ຮັກສາກົດຂອງພຣະຜູ້ເປັນເຈົ້າ; 7–12, ເອດເວີດ ພາດທຣິດ ໄດ້ຮັບການແຕ່ງຕັ້ງເປັນອະທິການສຳລັບສາດສະໜາຈັກ.*

1 ຈົ່ງເຊື່ອຟັງ ແລະ ຟັງ, ໂອ້ ພວກເຈົ້າຜູ້
ຄົນຂອງເຮົາ, ພຣະຜູ້ເປັນເຈົ້າ ແລະ ພຣະ
ເຈົ້າຂອງພວກເຈົ້າໄດ້ກ່າວ, ເຈົ້າຜູ້ຊຶ່ງເຮົາ
ຍິນດີຈະ [ກ]ອວຍພອນດ້ວຍພອນອັນຍິ່ງ
ໃຫຍ່ທີ່ສຸດໃນບັນດາພອນທັງໝົດ, ພວກ
ເຈົ້າທີ່ຟັງເຮົາ; ແລະ ພວກເຈົ້າທີ່ບໍ່ຟັງເຮົາ,
ເຮົາຈະ [ຂ]ສາບແຊ່ງ, ທີ່ [ຄ]ອ້າງນາມຂອງ
ເຮົາ, ດ້ວຍການສາບແຊ່ງອັນສາຫັດທີ່ສຸດ
ໃນບັນດາການສາບແຊ່ງທັງໝົດ.
2 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າແອວເດີຂອງ
ສາດສະໜາຈັກຂອງເຮົາ ຜູ້ຊຶ່ງເຮົາໄດ້ເອີ້ນ,
ຈົ່ງເບິ່ງ ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ພວກ
ເຈົ້າ, ວ່າພວກເຈົ້າຈະຮ່ວມຊຸມນຸມກັນເພື່ອ
[ກ]ເຫັນພ້ອມນຳກັນກ່ຽວກັບຄຳຂອງເຮົາ;
3 ແລະ ໂດຍຄຳອະທິຖານດ້ວຍສັດທາ
ຂອງພວກເຈົ້າ, ພວກເຈົ້າຈະໄດ້ຮັບ [ກ]ກົດ
ຂອງເຮົາ, ເພື່ອວ່າພວກເຈົ້າຈະຮູ້ວິທີປົກ
ຄອງສາດສະໜາຈັກຂອງເຮົາ ແລະ ໃຫ້
ທຸກສິ່ງຖືກຕ້ອງຕໍ່ໜ້າເຮົາ.
4 ແລະ ເຮົາຈະເປັນ [ກ]ຜູ້ປົກຄອງຂອງ
ພວກເຈົ້າເມື່ອເຮົາ [ຂ]ມາ; ແລະ ຈົ່ງເບິ່ງ, ເຮົາ
ມາຢ່າງໄວ, ແລະ ພວກເຈົ້າຈະເບິ່ງວ່າ ກົດ
ຂອງເຮົາຖືກຮັກສາ.
5 ຄົນໃດທີ່ຍອມ [ກ]ຮັບກົດຂອງເຮົາ ແລະ
[ຂ]ປະຕິບັດຕາມ, ຄົນໆນັ້ນເປັນສານຸສິດ
ຂອງເຮົາ; ແລະ ຄົນໃດທີ່ກ່າວວ່າເຂົາຍອມ
ຮັບມັນ ແລະ ບໍ່ປະຕິບັດຕາມ, ຄົນໆນັ້ນບໍ່
ໄດ້ເປັນສານຸສິດຂອງເຮົາ, ແລະ ຈະຖືກ
[ຄ]ຂັບໄລ່ອອກຈາກບັນດາພວກເຈົ້າ;
6 ເພາະບໍ່ເປັນການສົມຄວນທີ່ຈະມອບ
ສິ່ງຕ່າງໆທີ່ເປັນຂອງລູກໆຂອງອານາຈັກ
ໃຫ້ແກ່ຄົນເຫລົ່ານັ້ນທີ່ບໍ່ມີຄ່າຄວນ, ຫລື
ໃຫ້ [ກ]ໝາ, ຫລື ໂຍນ [ຂ]ໄຂ່ມຸກໃສ່ຕໍ່ໜ້າໝູ.
7 ແລະ ອີກຢ່າງໜຶ່ງ, ເປັນການສົມຄວນ
ທີ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ,
ຈະສ້າງ [ກ]ເຮືອນເພື່ອພັກພາອາໄສ ແລະ
[ຂ]ແປ.
8 ແລະ ອີກຢ່າງໜຶ່ງ, ເປັນການສົມຄວນ
ທີ່ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ ຈະດຳ
ລົງຊີວິດຕາມທີ່ລາວເຫັນວ່າດີ, ຕາບໃດທີ່
ລາວຍັງຮັກສາບັນຍັດຂອງເຮົາ.
9 ແລະ ອີກຢ່າງໜຶ່ງ, ເຮົາໄດ້ເອີ້ນຜູ້ຮັບ
ໃຊ້ຂອງເຮົາ [ກ]ເອດເວີດ ພາດທຣິດ; ແລະ

**41** 1 *ກ* ຄມພ ພອນ, ໃຫ້ພອນ, ເປັນພອນ.
*ຂ* ພບຍ 11:26–28; 1 ນຟ 2:23.
*ຄ* ຄພ 56:1–4; 112:24–26.
2 *ກ* ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
3 *ກ* ຄພ 42.
4 *ກ* ຊກຢ 14:9; ຄພ 45:59. ຄມພ ພຣະເຢຊູຄຣິດ—ການປົກຄອງຂອງພຣະຄຣິດໃນລະຫວ່າງພັນປີ.
*ຂ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
5 *ກ* ມທ 7:24.
*ຂ* ຢກບ 1:22–25; ຄພ 42:60.
*ຄ* ຄພ 50:8–9. ຄມພ ການຖືກໄລ່ອອກ.
6 *ກ* ມທ 15:26.
*ຂ* ມທ 7:6.
7 *ກ* ຄພ 42:71.
*ຂ* ອສ ແປພຣະຄຣິສຕະທຳຄຳພີ. ຄພ 45:60–61.
9 *ກ* ຄພ 36:1.

ເຮົາຈະມອບບັນຍັດຂໍ້ໜຶ່ງ, ວ່າລາວຄວນ
ໄດ້ຮັບການກຳນົດໂດຍສຽງຂອງສາດສະ
ໜາຈັກ, ແລະ ຮັບການແຕ່ງຕັ້ງເປັນ [ຂ]ອະທິ
ການ ສຳລັບສາດສະໜາຈັກ, ໂດຍປະສິນ
ຄ້າຂອງລາວ ແລະ [ຄ]ໃຊ້ເວລາທັງໝົດຂອງ
ລາວໃນວຽກງານຂອງສາດສະໜາຈັກ;
10 ເພື່ອໃຫ້ດູແລທຸກສິ່ງຕາມທີ່ຈະກຳນົດ
ໃຫ້ລາວໃນກົດຂອງເຮົາ ໃນວັນທີ່ເຮົາຈະ
ມອບມັນໃຫ້.
11 ແລະ ນີ້ເພາະໃຈຂອງລາວບໍລິສຸດຕໍ່
ເຮົາ, ເພາະລາວເປັນເໝືອນດັ່ງ [ກ]ນະທາ
ນາເອັນໃນສະໄໝກ່ອນ, ຊຶ່ງໃນຕົວລາວບໍ່
ມີ [ຂ]ອຸບາຍ.
12 ເຮົາ ມອບ ຄຳ ເຫລົ່າ ນີ້ ໃຫ້ ແກ່ ພວກ
ເຈົ້າ, ແລະ ມັນບໍລິສຸດຕໍ່ເຮົາ; ດັ່ງນັ້ນ, ຈົ່ງ
ລະວັງວ່າພວກເຈົ້າຈະຍຶດຖືມັນແນວໃດ,
ເພາະມັນຈະຕອບຢູ່ເທິງຈິດວິນຍານຂອງ
ພວກເຈົ້າໃນວັນແຫ່ງການພິພາກສາ. ແມ່ນ
ເປັນດັ່ງນັ້ນ. ອາແມນ.

# ພາກທີ 42

*ການເປີດເຜີຍທີ່ມອບໃຫ້ເປັນສອງພາກ ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດ ໂອໄຮໂອ, ວັນທີ 9 ແລະ 23 ເດືອນກຸມພາ, 1831. ພາກທຳອິດ, ປະກອບດ້ວຍ ຂໍ້ທີ 1 ຈົນເຖິງ 72, ໄດ້ຮັບຢູ່ຕໍ່ໜ້າແອວເດີສິບສອງຄົນ ແລະ ໃນການບັນລຸຕາມຄຳສັນຍາຊຶ່ງພຣະຜູ້ເປັນເຈົ້າໄດ້ໃຫ້ໄວ້ກ່ອນໜ້ານັ້ນວ່າ ຈະມອບ "ກົດ" ໃຫ້ໃນລັດໂອໄຮໂອ (ເບິ່ງ ພາກທີ 38:32). ພາກທີສອງປະກອບດ້ວຍຂໍ້ທີ 73 ຈົນເຖິງ 93. ສາດສະດາລະບຸວ່າການເປີດເຜີຍນີ້ "ບັນຈຸກົດຂອງສາດສະໜາຈັກ."*

*1–10, ແອວເດີຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ, ບັບຕິສະມາໃຫ້ຜູ້ປ່ຽນໃຈເຫລື້ອມໃສ, ແລະ ເສີມສ້າງສາດສະໜາຈັກ; 11–12, ເຂົາເຈົ້າຕ້ອງໄດ້ຮັບການເອີ້ນ ແລະ ຮັບການແຕ່ງຕັ້ງ ແລະ ຕ້ອງສິດສອນຫລັກທຳພຣະກິດຕິຄຸນທີ່ມີຢູ່ໃນພຣະຄຳພີ; 13–17, ເຂົາເຈົ້າຕ້ອງສິດສອນ ແລະ ທຳນາຍໂດຍອຳນາດຂອງພຣະວິນຍານ; 18–29, ໄພ່ພົນຂອງພຣະເຈົ້າຖືກບັນຊາບໍ່ໃຫ້ຂ້າຄົນ, ລັກ, ຕົວະ, ຕັນຫາລາມົກ, ຫລິ້ນຊູ້, ຫລື ກ່າວຮ້າຍຄົນອື່ນ; 30–39, ກົດຄວບຄຸມຊັບສິນທີ່ອຸທິດຖວາຍ ໄດ້ຖືກຕັ້ງຂຶ້ນ; 40–42, ຄວາມທະນົງຕົວ ແລະ ຄວາມກຽດຄ້ານຖືກກ່າວໂທດ; 43–52, ຄົນເຈັບປ່ວຍຕ້ອງໄດ້ຮັບການປິ່ນປົວຜ່ານການປະຕິບັດ ແລະ ໂດຍສັດທາ; 53–60, ພຣະຄຳພີປົກຄອງສາດສະໜາຈັກ ແລະ ຕ້ອງປະກາດຕໍ່ໂລກ; 61–69, ສະຖານທີ່ຂອງເຢຣູຊາເລັມໃໝ່ ແລະ ຄວາມລຶກລັບຂອງອານາຈັກຈະຖືກເປີດເຜີຍ; 70–73, ຊັບສິນທີ່ອຸທິດຖວາຍຈະຕ້ອງໃຊ້ເພື່ອຄ້ຳຈູນເຈົ້າໜ້າທີ່ຂອງສາດສະໜາຈັກ; 74–93, ກົດຄວບຄຸມການລ່ວງປະເວນີ, ການຫລິ້ນຊູ້, ການຂ້າຄົນ, ການລັກ, ແລະ ການສາລະພາບບາບຖືກຕັ້ງຂຶ້ນ.*

9 ຂ ຄພ 72:9–12; 107:68–75. ຄມພ ອະທິການ.
ຄ ຄພ 51.
11 ກ ຢຮ 1:47.
ຂ ຄມພ ມານຍາ.

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າແອວເດີຂອງສາດສະ ໜາ ຈັກ ຂອງ ເຮົາ, ຜູ້ໄດ້ມາຮ່ວມຊຸມນຸມນຳກັນໃນນາມຂອງເຮົາ, ແມ່ນແຕ່ພຣະເຢຊູຄຣິດ ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ພຣະຜູ້ຊ່ວຍໃຫ້ລອດຂອງໂລກ; ຕາບໃດທີ່ພວກເຈົ້າຍັງເຊື່ອໃນນາມຂອງເຮົາ ແລະ ຮັກສາບັນຍັດຂອງເຮົາ.

2 ອີກເທື່ອໜຶ່ງ ເຮົາກ່າວກັບພວກເຈົ້າວ່າ ຈົ່ງເຊື່ອຟັງ ແລະ ຟັງ ແລະ ເຊື່ອຟັງ [ກ]ກົດຊຶ່ງເຮົາຈະມອບໃຫ້ແກ່ ພວກເຈົ້າ.

3 ເພາະຕາມຄວາມຈິງແລ້ວ ເຮົາກ່າວວ່າ ເພາະພວກເຈົ້າໄດ້ມາຮ່ວມຊຸມນຸມນຳກັນຕາມ [ກ]ບັນຍັດ ຊຶ່ງໃນນັ້ນເຮົາໄດ້ບັນຊາພວກເຈົ້າ, ແລະ [ຂ]ເຫັນພ້ອມກັນກ່ຽວກັບເລື່ອງນີ້, ແລະ ໄດ້ທູນຖາມພຣະບິດາໃນນາມຂອງເຮົາສັນໃດ, ແມ່ນແຕ່ສັນນັ້ນພວກເຈົ້າຈະໄດ້ຮັບມັນ.

4 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາມອບບັນຍັດຂໍ້ທຳອິດນີ້ໃຫ້ພວກເຈົ້າ ວ່າພວກເຈົ້າຈະອອກໄປໃນນາມຂອງເຮົາ, ທຸກຄົນພວກເຈົ້າ, ຍົກເວັ້ນແຕ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ ຊິດນີ ຣິກດອນ ເທົ່ານັ້ນ.

5 ແລະ ເຮົາມອບບັນຍັດຂໍ້ໜຶ່ງໃຫ້ເຂົາເຈົ້າ ວ່າເຂົາເຈົ້າຈະອອກໄປຊົ່ວໄລຍະໜຶ່ງ, ແລະ ຈະມອບໃຫ້ໂດຍອຳນາດຂອງ [ກ]ພຣະວິນຍານ ວ່າເຂົາເຈົ້າຈະກັບຄືນມາເມື່ອໃດ.

6 ແລະ ພວກເຈົ້າຈະອອກໄປໃນອຳນາດຂອງພຣະວິນຍານຂອງເຮົາ, ສັ່ງສອນພຣະກິດຕິຄຸນຂອງເຮົາ, ເປັນ [ກ]ຄູ່ໆ, ໃນນາມຂອງເຮົາ, ເປັ່ງສຽງຂອງພວກເຈົ້າດັ່ງກັບສຽງແກ, ປະກາດຄຳຂອງເຮົາເໝືອນດັ່ງເທລີ່າທູດ ຂອງພຣະເຈົ້າ.

7 ແລະ ພວກ ເຈົ້າ ຈະ ອອກ ໄປ ບັບຕິສະມາດ້ວຍນ້ຳ, ກ່າວວ່າ: ທ່ານຈົ່ງກັບໃຈ, ທ່ານຈົ່ງກັບໃຈ, ເພາະ ອານາຈັກສະຫວັນໃກ້ເຂົ້າມາເຖິງແລ້ວ.

8 ແລະ ຈາກບ່ອນນີ້ ພວກເຈົ້າຈະໄປຫາພາກພື້ນຕ່າງໆທາງຕາເວັນຕົກ; ແລະ ຕາບໃດທີ່ພວກເຈົ້າຈະພົບຄົນທີ່ຮັບເອົາພວກເຈົ້າ, ພວກເຈົ້າຈະເສີມສ້າງສາດສະໜາຈັກຂອງເຮົາໃນທຸກພາກພື້ນ—

9 ຈົນກວ່າເວລາຈະມາເຖິງ ເມື່ອມັນຈະຖືກເປີດເຜີຍແກ່ພວກເຈົ້າຈາກເບື້ອງບົນ, ເມື່ອ [ກ]ເມືອງ [ຂ]ເຢຣູຊາເລັມໃໝ່ຈະຖືກຈັດຕຽມ, ເພື່ອພວກເຈົ້າຈະຖືກ [ຄ]ເຕົ້າໂຮມເຂົ້າເປັນອັນໜຶ່ງດຽວກັນ, ເພື່ອພວກເຈົ້າຈະໄດ້ເປັນ [ງ]ຜູ້ຄົນຂອງເຮົາ ແລະ ເຮົາຈະເປັນພຣະເຈົ້າຂອງພວກເຈົ້າ.

10 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກເຈົ້າວ່າ ຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ ພາດທຣິດ ຈະດຳລົງຢູ່ໃນ ຕຳແໜ່ງທີ່ເຮົາໄດ້ແຕ່ງຕັ້ງລາວ. ແລະ ເຫດການຈະບັງເກີດຂຶ້ນຄື ຖ້າຫາກລາວລ່ວງລະເມີດ [ຂ]ຄົນອື່ນຈະຖືກແຕ່ງຕັ້ງຂຶ້ນແທນລາວ. ແມ່ນເປັນດັ່ງນັ້ນ. ອາແມນ.

11 ອີກເທື່ອໜຶ່ງ ເຮົາກ່າວກັບພວກເຈົ້າວ່າ ຈະບໍ່ຖືກມອບໃຫ້ແກ່ຄົນໃດເພື່ອໄປ [ກ]ສັ່ງສອນພຣະກິດຕິຄຸນຂອງເຮົາ, ຫລືເພື່ອເສີມສ້າງສາດສະໜາຈັກຂອງເຮົາ,

**42** 2 *ກ* ຄພ 58:23.
ຄມພ ກົດ.
3 *ກ* ຄພ 38:32.
*ຂ* ມທ 18:19.
5 *ກ* ຄມພ ພຣະວິນຍານບໍລິສຸດ.
6 *ກ* ມຣກ 6:7.
ຄມພ ວຽກງານເຜີຍແຜ່.
9 *ກ* ຄພ 57:1–2.
*ຂ* ອທ 13:2–11;
ຄພ 45:66–71; 84:2–5;
ມຊ 7:62;
ຫຼຊ 1:10.
ຄມພ ເຢຣູຊາເລັມໃໝ່.
*ຄ* ຄມພ ອິດສະຣາເອນ—
ການເຕົ້າໂຮມຊາວ
ອິດສະຣາເອນ.
*ງ* ຊກຢ 8:8.
10 *ກ* ຄພ 41:9–11; 124:19.
*ຂ* ຄພ 64:40.
11 *ກ* ຄມພ ສັ່ງສອນ.

ຍົກເວັ້ນແຕ່ເຂົາຈະໄດ້ຮັບ [ຂ]ການແຕ່ງຕັ້ງໂດຍຄົນໃດຄົນໜຶ່ງທີ່ມີ [ຄ]ສິດອຳນາດ, ແລະ ເປັນທີ່ຮູ້ຈັກຕໍ່ສາດສະໜາຈັກວ່າລາວມີສິດອຳນາດ ແລະ ໄດ້ຮັບການແຕ່ງຕັ້ງຢ່າງຖືກຕ້ອງໂດຍຜູ້ນຳຂອງສາດສະໜາຈັກ.

12 ແລະ ອີກ ເທື່ອໜຶ່ງ, [ກ]ແອວເດີ, ປະໂລຫິດ ແລະ ຄູສອນ ຂອງສາດສະໜາຈັກນີ້ ຈະ [ຂ]ສິດສອນຫລັກທຳພຣະກິດຕິຄຸນຂອງເຮົາ, ຊຶ່ງມີຢູ່ໃນ [ຄ]ພຣະຄຣິສຕະທຳຄຳພີ ແລະ [ງ]ພຣະຄຳພີມໍມອນ, ຊຶ່ງໃນນັ້ນຄືຄວາມສົມບູນແຫ່ງ [ຈ]ພຣະກິດຕິຄຸນ.

13 ແລະ ພວກເຂົາຈະປະຕິບັດຕາມ [ກ]ພັນທະສັນຍາ ແລະ ກົດຂອງສາດສະໜາຈັກ, ແລະ ນີ້ຈະເປັນຄຳສອນຂອງພວກເຂົາ, ດັ່ງທີ່ພວກເຂົາໄດ້ຮັບການຊີ້ນຳຈາກພຣະວິນຍານ.

14 ແລະ ພຣະວິນຍານຈະຖືກມອບໃຫ້ແກ່ເຈົ້າໂດຍ [ກ]ການອະທິຖານດ້ວຍສັດທາ; ແລະ ຖ້າຫາກພວກເຈົ້າ ບໍ່ໄດ້ຮັບ [ຂ]ພຣະວິນຍານ ພວກເຈົ້າຈະບໍ່ສິດສອນ.

15 ແລະ ພວກເຈົ້າຈະປະຕິບັດຕາມທັງໝົດນີ້ ດັ່ງທີ່ເຮົາໄດ້ບັນຊາກ່ຽວກັບການສິດສອນຂອງພວກເຈົ້າ, ຈົນກວ່າຄວາມສົມບູນແຫ່ງ [ກ]ພຣະຄຳພີຂອງເຮົາຖືກມອບໃຫ້.

16 ແລະ ຂະນະທີ່ພວກເຈົ້າເປັ່ງສຽງຂອງພວກເຈົ້າໂດຍ [ກ]ພຣະຜູ້ປອບໂຍນ, ພວກເຈົ້າຈະກ່າວ ແລະ ທຳນາຍດັ່ງທີ່ເຮົາເຫັນວ່າດີ;

17 ເພາະ, ຈົ່ງເບິ່ງ, ພຣະຜູ້ປອບໂຍນຮູ້ທຸກສິ່ງ, ແລະ ເປັນພະຍານເຖິງພຣະບິດາ ແລະ ພຣະບຸດ.

18 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບສາດສະໜາຈັກ. ຢ່າ [ກ]ຂ້າຄົນ; ແລະ ຄົນທີ່ [ຂ]ຂ້າຄົນຈະບໍ່ໄດ້ຮັບການໃຫ້ອະໄພໃນໂລກນີ້, ຫລື ໃນໂລກທີ່ຈະມາເຖິງ.

19 ແລະ ອີກເທື່ອໜຶ່ງ, ເຮົາກ່າວວ່າ ຢ່າຂ້າຄົນ; ແຕ່ຄົນທີ່ຂ້າຄົນຈະ [ກ]ຕາຍ.

20 ຢ່າລັກ; ແລະ ຄົນທີ່ [ກ]ລັກ ແລະ ບໍ່ກັບໃຈ ຈະຖືກຂັບໄລ່ອອກໄປ.

21 ຢ່າຕົວະ; ຄົນທີ່ [ກ]ຕົວະ ແລະ ບໍ່ກັບໃຈຈະຖືກຂັບໄລ່ອອກໄປ.

22 ຈົ່ງ [ກ]ຮັກເມຍຂອງພວກເຈົ້າດ້ວຍສຸດໃຈຂອງພວກເຈົ້າ, ແລະ ຈະ [ຂ]ແນບສະໜິດຢູ່ກັບນາງ ແລະ ບໍ່ມີຄົນອື່ນອີກ.

23 ແລະ ຄົນທີ່ຫລຽວເບິ່ງຜູ້ຍິງດ້ວຍ [ກ]ຄວາມໄຄ່ໃນນາງ ຈະປະຕິເສດສັດທາ,

11 *ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ; ເອີ້ນ, ການເອີ້ນ, ຖືກເອີ້ນ ຈາກພຣະເຈົ້າ, ຕຳແໜ່ງ.
*ຄ* ຄມພ ສິດອຳນາດ; ຖານະປະໂລຫິດ.
12 *ກ* ຄມພ ແອວເດີ.
*ຂ* ມຊຢ 18:19–20; ຄພ 52:9, 36. ຄມພ ສອນ, ຜູ້ສອນ, ຄູສອນ.
*ຄ* ຄມພ ພຣະຄຣິສຕະທຳຄຳພີ.
*ງ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ; ພຣະຄຳພີມໍມອນ.
*ຈ* ຄມພ ພຣະກິດຕິຄຸນ.
13 *ກ* ອສ ຄພ 20 (ເບິ່ງ ຫົວຂໍ້ຂອງ ພາກທີ 20).
14 *ກ* ຄພ 63:64. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ—ການສອນດ້ວຍພຣະວິນຍານ; ພຣະວິນຍານບໍລິສຸດ.
15 *ກ* ຄພ 42:56–58.
16 *ກ* 1 ກຣທ 2:10–14; ຄພ 68:2–4. ຄມພ ພຣະຜູ້ປອບໂຍນ.
18 *ກ* ອພຍ 20:13–17; ມທ 5:21–37; 2 ນຟ 9:35; ມຊຢ 13:21–24; 3 ນຟ 12:21–37.
*ຂ* ຄມພ ຄາດຕະກຳ, ການຄາດຕະກຳ.
19 *ກ* ຄມພ ໂທດປະຫານຊີວິດ.
20 *ກ* ຄມພ ລັກ, ການລັກ.
21 *ກ* ຄມພ ຊື່ສັດ, ຄວາມຊື່ສັດ; ຕົວະ.
22 *ກ* ຄມພ ແຕ່ງງານ, ການແຕ່ງງານ; ຮັກ, ຄວາມຮັກ.
*ຂ* ປຖກ 2:23–24; ອຟຊ 5:25, 28–33.
23 *ກ* ມທ 5:28; 3 ນຟ 12:28; ຄພ 63:16. ຄມພ ກິເລດຕັນຫາ.

ແລະ ຈະບໍ່ມີພຣະວິນຍານຢູ່ນຳ; ແລະ ຖ້າ
ຫາກເຂົາບໍ່ກັບໃຈ ເຂົາຈະຖືກຂັບໄລ່ອອກ
ໄປ.
24 ຢ່າຫລິ້ນຊູ້; ແລະ ຄົນທີ່ [ກ]ຫລິ້ນຊູ້,
ແລະ ບໍ່ກັບໃຈ, ຈະຖືກຂັບໄລ່ອອກໄປ.
25 ແຕ່ຄົນທີ່ໄດ້ຫລິ້ນຊູ້ ແລະ [ກ]ກັບໃຈ
ດ້ວຍສຸດໃຈຂອງເຂົາ, ແລະ ປະຖິ້ມມັນ,
ແລະ ບໍ່ເຮັດມັນອີກ, ພວກເຈົ້າຈົ່ງ [ຂ]ອະໄພ
ໃຫ້ເຂົາ;
26 ແຕ່ຖ້າຫາກເຂົາເຮັດຄືນ [ກ]ອີກ, ເຂົາ
ຈະບໍ່ໄດ້ຮັບການໃຫ້ອະໄພ, ແຕ່ຈະຖືກຂັບ
ໄລ່ອອກໄປ.
27 ຢ່າ [ກ]ກ່າວຮ້າຍເພື່ອນບ້ານຂອງພວກ
ເຈົ້າ, ຫລື ທຳຮ້າຍເຂົາແຕ່ຢ່າງໃດ.
28 ພວກເຈົ້າຮູ້ກົດຂອງເຮົາກ່ຽວກັບສິ່ງ
ເຫລົ່ານີ້ ຊຶ່ງໃຫ້ໄວ້ຢູ່ໃນພຣະຄຳພີຂອງ
ເຮົາ; ຄົນທີ່ເຮັດບາບ ແລະ ບໍ່ກັບໃຈ ຈະຖືກ
ຂັບໄລ່ [ກ]ອອກໄປ.
29 ຖ້າຫາກພວກເຈົ້າ [ກ]ຮັກເຮົາ ພວກ
ເຈົ້າຈະ [ຂ]ຮັບໃຊ້ເຮົາ ແລະ [ຄ]ຮັກສາບັນຍັດ
ທັງໝົດຂອງເຮົາ.
30 ແລະ ຈົ່ງເບິ່ງ, ຈົ່ງນຶກເຖິງຄົນ [ກ]ຍາກ
ຈົນ, ແລະ [ຂ]ອຸທິດຊັບສິນຂອງພວກເຈົ້າ
ເພື່ອ [ຄ]ຄ້ຳຈູນເຂົາ ກັບສິ່ງທີ່ພວກເຈົ້າມີເພື່ອ
ແບ່ງປັນໃຫ້ເຂົາ, ດ້ວຍພັນທະສັນຍາ ແລະ
ໃບຢັ້ງຢືນ ຊຶ່ງຈະຝ່າຝືນບໍ່ໄດ້.
31 ແລະ ຕາບໃດທີ່ພວກເຈົ້າໄດ້ [ກ]ໃຫ້
ເຂົ້າຂອງ ຂອງພວກເຈົ້າໃຫ້ແກ່ຄົນ [ຂ]ຍາກ
ຈົນ, ພວກເຈົ້າກໍໄດ້ເຮັດແກ່ເຮົາ; ແລະ
ຄວນມອບມັນໃຫ້ແກ່ [ຄ]ອະທິການຂອງ
ສາດສະໜາຈັກຂອງເຮົາ ແລະ ທີ່ປຶກສາ
ຂອງລາວ, ແອວເດີສອງຄົນ, ຫລື ມະຫາ
ປະໂລຫິດ, ດັ່ງທີ່ລາວຈະກຳນົດ ຫລື ໄດ້
ຖືກ [ງ]ແຕ່ງຕັ້ງເປັນທາງການໄວ້ສຳລັບຈຸດ
ປະສົງນັ້ນ.
32 ແລະ ເຫດການຈະບັງເກີດຂຶ້ນ ຄື
ຫລັງຈາກໄດ້ມອບມັນໃຫ້ແກ່ອະທິການ
ຂອງສາດສະໜາຈັກຂອງເຮົາ, ແລະ ຫລັງ
ຈາກທີ່ລາວໄດ້ຮັບປະຈັກພະຍານກ່ຽວກັບ
[ກ]ການອຸທິດຖວາຍຊັບສິນຂອງສາດສະ
ໜາຈັກຂອງເຮົາ, ວ່າຈະເອົາມັນໄປຈາກ
ສາດສະໜາຈັກບໍ່ໄດ້, ຕາມບັນຍັດຂອງ
ເຮົາ, ທຸກໆຄົນຈະຖືກເຮັດໃຫ້ [ຂ]ຮູ້ຈັກຮັບ
ຜິດຊອບຕໍ່ເຮົາ, ເປັນ [ຄ]ຜູ້ພິທັກຮັກສາຊັບ
ສິນຂອງຕົນເອງ, ຫລື ສິ່ງທີ່ເຂົາໄດ້ຮັບໂດຍ
ການອຸທິດຖວາຍ, ເທົ່າທີ່ຈະພຽງພໍສຳລັບ
ເຂົາ ແລະ [ງ]ຄອບຄົວ.
33 ແລະ ອີກເທື່ອໜຶ່ງ, ຖ້າມີຊັບສິນຢູ່
ໃນມືຂອງສາດສະໜາຈັກ, ຫລື ບຸກຄົນໃດ
ໜຶ່ງ, ມີຫລາຍກວ່າຄວາມຈຳເປັນທີ່ຈະຄ້ຳ
ຈູນເຂົາຫລັງຈາກການອຸທິດຖວາຍເທື່ອທຳ
ອິດ, [ກ]ສ່ວນທີ່ເຫລືອຈະຖືກອຸທິດຖວາຍໃຫ້
ແກ່ອະທິການ, ມັນຈະຖືກຮັກສາໄວ້ເພື່ອ
ຊ່ວຍເຫລືອຜູ້ທີ່ບໍ່ມີເປັນບາງຄັ້ງ, ເພື່ອວ່າ

24 *ກ* ຄມພ ຫລິ້ນຊູ້.
25 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຢຮ 8:3–11.
ຄມພ ອະໄພ, ໃຫ້ອະໄພ.
26 *ກ* 2 ປຕ 2:20–22;
ຄພ 82:7.
27 *ກ* ຄມພ ນິນທາ.
28 *ກ* ຄມພ ການຖືກໄລ່ອອກ.
29 *ກ* ຢຮ 14:15, 21.
*ຂ* ຄມພ ຮັບໃຊ້, ການຮັບໃຊ້.
*ຄ* ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.
30 *ກ* ມຊຢ 4:16–26;
ແອວ 1:27.
ຄມພ ຍາກຈົນ.
*ຂ* ຄມພ ອຸທິດຖວາຍ, ກົດ
ແຫ່ງການອຸທິດຖວາຍ.
*ຄ* ຄມພ ຄວາມຜາສຸກ.
31 *ກ* ມຊຢ 2:17.
ຄມພ ໃຫ້ທານ,
ການໃຫ້ທານ.
*ຂ* ຄມພ ຍາກຈົນ.
*ຄ* ຄມພ ອະທິການ.
*ງ* ຄມພ ແຕ່ງຕັ້ງເປັນ
ທາງການ, ການແຕ່ງ
ຕັ້ງເປັນທາງການ.
32 *ກ* ຄພ 51:4.
*ຂ* ຄພ 72:3–11.
ຄມພ ຮັບຜິດຊອບ, ຮູ້
ຈັກຮັບຜິດຊອບ, ຄວາມ
ຮັບຜິດຊອບ.
*ຄ* ຄມພ ພິທັກຮັກສາ, ຜູ້ພິທັກ
ຮັກສາ, ການພິທັກຮັກສາ.
*ງ* ຄພ 51:3.
33 *ກ* ຄພ 42:55; 51:13;
119:1–3.

ທຸກຄົນທີ່ຂາດເຂີນຈະມີໃຊ້ ແລະ ໄດ້ຮັບ
ຕາມຄວາມຕ້ອງການຂອງເຂົາ.
34 ສະນັ້ນ, ສິ່ງທີ່ເຫລືອຢູ່ຈະຖືກຮັກສາ
ໄວ້ໃນຄັງຂອງເຮົາ, ເພື່ອປະຕິບັດຕໍ່ຄົນ
ຍາກຈົນ ແລະ ຄົນຂັດສົນ, ດັ່ງທີ່ຈະກຳນົດ
ໄວ້ໂດຍສະພາສູງຂອງສາດສະໜາຈັກ,
ແລະ ອະທິການ ແລະ ສະພາຂອງລາວ;
35 ແລະ ເພື່ອຈຸດປະສົງຂອງການຊື້ທີ່
ດິນເພື່ອປະໂຫຍດສ່ວນລວມຂອງສາດ
ສະໜາຈັກ, ແລະ ເພື່ອການສ້າງບ້ານແຫ່ງ
ການນະມັດສະການ, ແລະ ການເສີມສ້າງ
[ກ]ເຢຣູຊາເລັມໃໝ່ ຊຶ່ງຈະເປີດເຜີຍໃຫ້ຮູ້ຕໍ່
ຈາກນີ້ໄປ—
36 ເພື່ອຜູ້ຄົນແຫ່ງພັນທະສັນຍາຂອງ
ເຮົາຈະຖືກເຕົ້າໂຮມເຂົ້າເປັນອັນໜຶ່ງດຽວ
ກັນໃນວັນນັ້ນເມື່ອເຮົາຈະ [ກ]ມາຫາ [ຂ]ພຣະ
ວິຫານຂອງເຮົາ. ແລະ ສິ່ງນີ້ເຮົາເຮັດໄປ
ເພື່ອຄວາມລອດຂອງຜູ້ຄົນຂອງເຮົາ.
37 ແລະ ເຫດການຈະບັງເກີດຂຶ້ນຄື ຄົນ
ທີ່ເຮັດບາບ ແລະ ບໍ່ກັບໃຈ ຈະຖືກຂັບ [ກ]ໄລ່
ອອກຈາກສາດສະໜາຈັກ, ແລະ ຈະບໍ່ໄດ້
ຮັບສິ່ງທີ່ລາວໄດ້ [ຂ]ອຸທິດຖວາຍໃຫ້ແກ່ຄົນ
ຍາກຈົນ ແລະ ຄົນຂັດສົນຂອງສາດສະໜາ
ຈັກຂອງເຮົາອີກ, ຫລື ອີກຄຳໜຶ່ງ, ໃຫ້ແກ່
ເຮົາ—
38 ເພາະຕາບໃດທີ່ພວກເຈົ້າໄດ້ [ກ]ເຮັດ
ສິ່ງເຫລົ່ານີ້ແກ່ຄົນທີ່ຕ່ຳຕ້ອຍທີ່ສຸດ, ພວກ
ເຈົ້າກໍໄດ້ເຮັດແກ່ເຮົາເໝືອນກັນ.
39 ເພາະເຫດການຈະບັງເກີດຂຶ້ນຄື
ເລື່ອງທີ່ເຮົາໄດ້ກ່າວໂດຍປາກຂອງສາດ
ສະດາຈະສຳເລັດຄົບຖ້ວນ; ເພາະເຮົາຈະ
ອຸທິດຖວາຍຄວາມຮັ່ງມີຂອງຄົນທີ່ຮັບເອົາ
ພຣະກິດຕິຄຸນຂອງເຮົາໃນບັນດາຄົນຕ່າງ
ຊາດ ໃຫ້ແກ່ຄົນຍາກຈົນຂອງຜູ້ຄົນຂອງ
ເຮົາ ຜູ້ເປັນເຊື້ອສາຍອິດສະຣາເອນ.
40 ແລະ ອີກເທື່ອໜຶ່ງ, ຢ່າ [ກ]ອວດດີໃນ
ໃຈຂອງພວກເຈົ້າ; ຈົ່ງໃຫ້ [ຂ]ອາພອນທັງ
ໝົດຂອງພວກເຈົ້າຮຽບຮ້ອຍ, ແລະ ຄວາມ
ງາມຂອງມັນເປັນຄວາມງາມຂອງວຽກງານ
ຈາກມືຂອງພວກເຈົ້າເອງ;
41 ແລະ ຈົ່ງໃຫ້ທຸກສິ່ງສຳເລັດໃນຄວາມ
ສະອາດຕໍ່ເຮົາ.
42 ຢ່າກຽດຄ້ານ; ເພາະຄົນທີ່ [ກ]ກຽດຄ້ານ
ຈະບໍ່ກິນອາຫານ ຫລື ໃສ່ອາພອນຂອງຄົນ
ທຳງານ.
43 ແລະ ຜູ້ໃດກໍຕາມໃນບັນດາພວກ
ເຈົ້າທີ່ [ກ]ເຈັບປ່ວຍ, ແລະ ບໍ່ມີສັດທາທີ່ຈະ
ຮັບການປິ່ນປົວ, ແຕ່ເຊື່ອ, ຈະໄດ້ຮັບການ
ບຳລຸງລ້ຽງດ້ວຍຄວາມອ່ອນໂຍນທຸກຢ່າງ,
ດ້ວຍສະໝຸນໄພ ແລະ ອາຫານອ່ອນ, ແລະ
ການນັ້ນບໍ່ແມ່ນໂດຍມືຂອງສັດຕູ.
44 ແລະ ພວກແອວເດີຂອງສາດສະໜາ
ຈັກ, ສອງຄົນ ຫລື ຫລາຍກວ່ານັ້ນ, ຈະຖືກ
ເອີ້ນ, ແລະ ຈະອະທິຖານເພື່ອ ແລະ ວາງ
[ກ]ມືຂອງພວກເຂົາໃສ່ເທິງເຂົາໃນນາມຂອງ
ເຮົາ; ແລະ ຖ້າເຂົາ [ຂ]ຕາຍ ເຂົາຈະຕາຍ
ເພື່ອເຮົາ, ແລະ ຖ້າເຂົາມີຊີວິດຢູ່ ເຂົາຈະມີ
ຊີວິດຢູ່ເພື່ອເຮົາ.

35 *ກ* ຄມພ ຊີໂອນ;
ເຢຣູຊາເລັມໃໝ່.
36 *ກ* ຄພ 36:8.
*ຂ* ມລກ 3:1.
37 *ກ* ຄພ 41:5; 50:8–9.
ຄມພ ການຖືກໄລ່ອອກ.
*ຂ* ຄມພ ອຸທິດຖວາຍ, ກົດ
ແຫ່ງການອຸທິດຖວາຍ.
38 *ກ* ມທ 25:34–40.
ຄມພ ຄວາມຜາສຸກ;
ໃຈບຸນ, ຄວາມໃຈບຸນ.
40 *ກ* ສພສ 16:5.
ຄມພ ຈອງຫອງ,
ຄວາມຈອງຫອງ.
*ຂ* ຄມພ ຮຽບຮ້ອຍ,
ຄວາມຮຽບຮ້ອຍ.
42 *ກ* ຄພ 68:30–32.
ຄມພ ກຽດຄ້ານ,
ຄວາມກຽດຄ້ານ.
43 *ກ* ຄມພ ເຈັບປ່ວຍ,
ພະຍາດໂລຄາ.
44 *ກ* ຄມພ ການປະຕິບັດຕໍ່ຄົນ
ເຈັບປ່ວຍ;
ມື, ການວາງ.
*ຂ* ຣມ 14:8;
ພນມ 14:13;
ຄພ 63:49.

45 ຈົ່ງ [ກ]ຢູ່ນຳກັນໃນ [ຂ]ຄວາມຮັກ, ເຖິງ
ຂະໜາດທີ່ພວກເຈົ້າຈະ [ຄ]ຮ້ອງໄຫ້ນຳຄົນທີ່
ຕາຍໄປ, ແລະ ໂດຍສະເພາະຢ່າງຍິ່ງນຳ
ຄົນທີ່ບໍ່ມີ [ງ]ຄວາມຫວັງໃນການຟື້ນຄືນຊີ
ວິດອັນຮຸ່ງເຫລື້ອມ.
46 ແລະ ເຫດການຈະບັງເກີດຂຶ້ນຄື ຄົນ
ທີ່ຕາຍໃນເຮົາ ຈະບໍ່ໄດ້ຊີມລົດຊາດຂອງ
[ກ]ຄວາມຕາຍ, ເພາະມັນຈະ [ຂ]ຫວານຊື່ນສຳ
ລັບເຂົາ;
47 ແລະ ຄົນທີ່ບໍ່ໄດ້ຕາຍໃນເຮົາ, ວິບັດ
ແກ່ເຂົາ, ເພາະຄວາມຕາຍຂອງເຂົາຂົມ
ຂື່ນ.
48 ແລະ ອີກເທື່ອໜຶ່ງ, ເຫດການຈະບັງ
ເກີດຂຶ້ນຄື ຄົນທີ່ມີ [ກ]ສັດທາໃນເຮົາທີ່ຈະຮັບ
[ຂ]ການປິ່ນປົວໃຫ້ຫາຍດີ, ແລະ ບໍ່ໄດ້ຖືກ
[ຄ]ກຳນົດໃຫ້ຕາຍ, ຈະຫາຍດີ.
49 ຄົນທີ່ມີສັດທາວ່າຈະເຫັນ ກໍຈະໄດ້
ເຫັນ.
50 ຄົນທີ່ມີສັດທາວ່າຈະໄດ້ຍິນ ກໍຈະໄດ້
ຍິນ.
51 ຄົນເປ້ຍລ່ອຍທີ່ມີສັດທາວ່າຈະຍ່າງ
ໄດ້ ກໍຈະຍ່າງໄດ້.
52 ແລະ ຄົນທີ່ບໍ່ມີສັດທາທີ່ຈະເຮັດສິ່ງ
ເຫລົ່ານີ້, ແຕ່ເຊື່ອໃນເຮົາ, ມີຄວາມສາມາດ
ທີ່ຈະກາຍເປັນ [ກ]ບຸດຂອງເຮົາ; ແລະ ຕາບ
ໃດທີ່ເຂົາບໍ່ໄດ້ຝ່າຝືນກົດຂອງເຮົາ ພວກ
ເຈົ້າຈະຕ້ອງ [ຂ]ຊ່ວຍບັນເທົາຄວາມເຈັບ
ປ່ວຍຂອງເຂົາ.
53 ພວກເຈົ້າຈະຕ້ອງຍຶດໝັ້ນໃນການ
ເປັນ [ກ]ຜູ້ພິທັກຮັກສາຂອງພວກເຈົ້າ.
54 ຢ່າເອົາອາພອນຂອງອ້າຍນ້ອງຂອງ
ພວກເຈົ້າ; ພວກເຈົ້າຕ້ອງຈ່າຍຄ່າສິ່ງທີ່
ພວກເຈົ້າໄດ້ຮັບຈາກອ້າຍນ້ອງຂອງພວກ
ເຈົ້າ.
55 ແລະ ຖ້າ ຫາກ ພວກ ເຈົ້າ [ກ]ໄດ້ ຮັບ
ຫລາຍກວ່າສິ່ງທີ່ຈະຄ້ຳຈູນພວກເຈົ້າ, ໃຫ້
ພວກເຈົ້າມອບມັນໄວ້ໃນ [ຂ]ຄັງຂອງເຮົາ,
ເພື່ອວ່າທຸກສິ່ງຈະເປັນໄປຕາມທີ່ເຮົາໄດ້
ກ່າວໄວ້.
56 ຈົ່ງຖາມ, ແລະ ຈະມອບ [ກ]ພຣະຄຳພີ
ຂອງເຮົາໃຫ້ດັ່ງທີ່ເຮົາໄດ້ກຳນົດໄວ້, ແລະ
ມັນຈະຖືກ [ຂ]ຮັກສາໄວ້ໃນຄວາມປອດໄພ;
57 ແລະ ເຫັນສົມຄວນທີ່ພວກເຈົ້າຈະ
ງຽບຢູ່ກ່ຽວກັບມັນ, ແລະ ບໍ່ສິດສອນມັນຈົນ
ກວ່າພວກເຈົ້າຈະໄດ້ຮັບມັນຢ່າງສົມບູນ.
58 ແລະ ເຮົາມອບບັນຍັດຂໍ້ໜຶ່ງໃຫ້ພວກ
ເຈົ້າວ່າ ເມື່ອນັ້ນພວກເຈົ້າຈະສິດສອນມັນ
ໃຫ້ແກ່ມະນຸດທັງປວງ; ເພາະມັນຈະຕ້ອງ
ຖືກສິດສອນໃຫ້ແກ່ທຸກປະຊາຊາດ, ທຸກ
ຕະກຸນ, ທຸກພາສາ ແລະ ທຸກຜູ້ຄົນ [ກ]ທັງ
ປວງ.
59 ຈົ່ງຮັບເອົາສິ່ງທີ່ພວກເຈົ້າໄດ້ຮັບ, ຊຶ່ງ
ມອບໃຫ້ແກ່ພວກເຈົ້າໃນພຣະຄຳພີຂອງ
ເຮົາໄວ້ເປັນກົດ, ເພື່ອເປັນກົດຂອງເຮົາໃນ
ການປົກຄອງສາດສະໜາຈັກຂອງເຮົາ;
60 ແລະ ຄົນທີ່ [ກ]ເຮັດຕາມສິ່ງເຫລົ່ານີ້ຈະ

45 *ກ* 1 ຢຮ 4:16, 20–21.
*ຂ* ຄມພ ຮັກ, ຄວາມຮັກ.
*ຄ* ແອວ 28:11–12.
*ງ* 1 ກຣທ 15:19–22. ຄມພ ຫວັງ, ຄວາມຫວັງ.
46 *ກ* ຄມພ ຄວາມຕາຍທາງຮ່າງກາຍ.
*ຂ* ພນມ 14:13.
48 *ກ* ຄພ 46:19. ຄມພ ສັດທາ.
*ຂ* ຄມພ ປິ່ນປົວ, ການປິ່ນປົວ.
*ຄ* ປຍຈ 3:1–2; ກຈກ 17:26; ຮຣ 9:27; ຄພ 122:9.
52 *ກ* ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
*ຂ* ຣມ 15:1. ຄມພ ຜູກມິດ.
53 *ກ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
55 *ກ* ຄພ 82:17–19; 119:1–3.
*ຂ* ຄພ 42:34; 51:13.
56 *ກ* ຄພ 45:60–61.
*ຂ* ຄມພ ພຣະຄຳພີ—ຄຸນຄ່າຂອງພຣະຄຳພີ.
58 *ກ* ຄພ 1:2.
60 *ກ* ຄພ 41:5. ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.

ລອດ, ແລະ ຄົນທີ່ບໍ່ເຮັດຕາມນັ້ນຈະ [ຂ]ອັບ
ປະໂຫຍດ ຖ້າຫາກເຂົາເຮັດແບບນີ້ຢູ່ຕໍ່ໄປ.
61 ຖ້າພວກເຈົ້າຈະຖາມ, ພວກເຈົ້າຈະ
ໄດ້ຮັບ [ກ]ການເປີດເຜີຍຕື່ມໃສ່ການເປີດ
ເຜີຍ, [ຂ]ຄວາມຮູ້ຕື່ມໃສ່ຄວາມຮູ້, ເພື່ອວ່າ
ພວກເຈົ້າຈະຮູ້ [ຄ]ຄວາມລຶກລັບ ແລະ ສິ່ງທີ່
ເປັນ [ງ]ສັນຕິສຸກ—ສິ່ງຊຶ່ງນຳ [ຈ]ຄວາມຊື່ນຊົມ
ມາໃຫ້, ສິ່ງຊຶ່ງນຳຊີວິດນິລັນດອນມາໃຫ້.
62 ຈົ່ງຖາມ, ແລະ ມັນຈະຖືກເປີດເຜີຍ
ແກ່ພວກເຈົ້າໃນເວລາອັນເໝາະສົມຂອງ
ເຮົາເອງ ວ່າ [ກ]ເຢຣູຊາເລັມໃໝ່ຈະຖືກສ້າງ
ຂຶ້ນຢູ່ໃສ.
63 ແລະ ຈົ່ງເບິ່ງ, ເຫດການຈະບັງເກີດ
ຂຶ້ນຄື ຜູ້ຮັບໃຊ້ຂອງເຮົາຈະຖືກສົ່ງອອກໄປ
ທິດຕາເວັນອອກ ແລະ ທິດຕາເວັນຕົກ,
ທິດເໜືອ ແລະ ທິດໃຕ້.
64 ແລະ ແມ່ນແຕ່ບັດນີ້, ໃຫ້ຄົນທີ່ໄປທິດ
ຕາເວັນອອກສິດສອນຜູ້ປ່ຽນໃຈເຫລື້ອມ
ໃສວ່າໃຫ້ຫລົບໜີໄປຫາ [ກ]ທິດຕາເວັນຕົກ,
ແລະ ນີ້ເປັນຜົນເນື່ອງມາຈາກສິ່ງທີ່ຈະມາ
ສູ່ແຜ່ນດິນໂລກ, ແລະ ຈາກ [ຂ]ການມົ້ວສຸມ
ລັບ.
65 ຈົ່ງເບິ່ງ, ພວກເຈົ້າຈົ່ງຍຶດຖືສິ່ງເຫລົ່າ
ນີ້ທັງໝົດ, ແລະ ລາງວັນອັນຍິ່ງໃຫຍ່ຈະ
ເປັນຂອງພວກເຈົ້າ; ເພາະມັນຖືກມອບໃຫ້
ແກ່ພວກເຈົ້າ ເພື່ອຈະໄດ້ຮູ້ຄວາມລຶກລັບ
ຂອງອານາຈັກ, ແຕ່ບໍ່ໄດ້ມອບໃຫ້ແກ່ໂລກ
ເພື່ອຮູ້ຈັກມັນ.
66 ຈົ່ງຍຶດຖືກົດທີ່ພວກເຈົ້າໄດ້ຮັບ ແລະ
ຈົ່ງຊື່ສັດ.
67 ແລະ ພວກເຈົ້າຈະໄດ້ຮັບ [ກ]ພັນທະ
ສັນຍາຂອງສາດສະໜາຈັກໃນພາຍຫລັງ,
ຊຶ່ງຈະພຽງພໍທີ່ຈະສະຖາປະນາພວກເຈົ້າ,
ທັງຢູ່ບ່ອນນີ້ ແລະ ໃນເຢຣູຊາເລັມໃໝ່.
68 ສະນັ້ນ, ຄົນໃດທີ່ຂາດ [ກ]ສະຕິປັນຍາ,
ກໍໃຫ້ຄົນນັ້ນທູນຂໍຈາກເຮົາ, ແລະ ເຮົາຈະ
ມອບມັນໃຫ້ເຂົາດ້ວຍພຣະກະລຸນາ ແລະ
ບໍ່ຊົງກ່າວຕິ.
69 ຈົ່ງລື້ນເລີງ ແລະ ປິຕິຍິນດີເຖີດ,
ເພາະພວກເຈົ້າໄດ້ຮັບ [ກ]ອານາຈັກແລ້ວ,
ຫລື ອີກຄຳໜຶ່ງ, [ຂ]ຂໍກະແຈ ຂອງສາດສະ
ໜາຈັກໄດ້ຖືກມອບໃຫ້ແລ້ວ. ແມ່ນເປັນດັ່ງ
ນັ້ນ. ອາແມນ.
70 [ກ]ປະໂລຫິດ ແລະ [ຂ]ຄູສອນ ຈະມີສິ່ງທີ່
ຢູ່ໃນ [ຄ]ຄວາມພິທັກຮັກສາຂອງພວກເຂົາ,
ແມ່ນແຕ່ເໝືອນດັ່ງສະມາຊິກ.
71 ແລະ ແອວເດີ ຫລື ມະຫາປະໂລຫິດ
ຜູ້ໄດ້ຮັບການແຕ່ງຕັ້ງໃຫ້ຊ່ວຍເຫລືອອະທິ
ການໃນຖານະທີ່ປຶກສາຂອງລາວໃນທຸກ
ສິ່ງ, ຈະໃຫ້ຄອບຄົວຂອງພວກເຂົາໄດ້ຮັບ
ການຄ້ຳຈູນດ້ວຍຊັບສິນທີ່ [ກ]ອຸທິດຖວາຍ
ແກ່ອະທິການ, ເພື່ອຜົນປະໂຫຍດຂອງຄົນ

60 *ຂ* ມຊ 5:15. ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
61 *ກ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ອຣຣ 1:2. ຄມພ ຄວາມຮູ້; ປະຈັກພະຍານ.
*ຄ* ຄພ 63:23. ຄມພ ຄວາມລຶກລັບຂອງພຣະເຈົ້າ.
*ງ* ຄພ 39:6.
*ຈ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
62 *ກ* ຄພ 57:1–5.
64 *ກ* ຄພ 45:64.
*ຂ* ຄມພ ການມົ້ວສຸມລັບ.
67 *ກ* ຄພ 82:11–15.
68 *ກ* ຢກບ 1:5. ຄມພ ສະຕິປັນຍາ.
69 *ກ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
*ຂ* ມທ 16:19; ຄພ 65:2. ຄມພ ຂໍກະແຈຂອງຖານະປະໂລຫິດ.
70 *ກ* ຄມພ ປະໂລຫິດ, ຖານະປະໂລຫິດແຫ່ງອາໂຣນ.
*ຂ* ຄມພ ຄູສອນ, ຖານະປະໂລຫິດແຫ່ງອາໂຣນ.
*ຄ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
71 *ກ* ຄມພ ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.

ຍາກຈົນ, ແລະ ເພື່ອຈຸດປະສົງອື່ນໆ, ດັ່ງທີ່ກ່າວຜ່ານມາ;

72 ຖ້າບໍ່ດັ່ງນັ້ນ ພວກເຂົາຕ້ອງໄດ້ຮັບການທົດແທນທີ່ຍຸດຕິທຳສຳລັບການຮັບໃຊ້ຂອງພວກ ເຂົາ, ຖ້າບໍ່ ເປັນສິ່ງຢູ່ ໃນຄວາມພິທັກຮັກສາ ກໍເປັນໃນທາງອື່ນໆ, ຕາມການເຫັນສົມຄວນທີ່ສຸດ ຫລື ຕາມການຕັດສິນໃຈຂອງທີ່ປຶກສາ ແລະ ອະທິການ.

73 ແລະ ອະທິການກໍຄືກັນ, ຈະໄດ້ຮັບການຄ້ຳຈູນ, ຫລື ການທົດແທນຢ່າງຍຸດຕິທຳສຳລັບການຮັບໃຊ້ທັງໝົດຂອງລາວໃນສາດສະໜາຈັກ.

74 ຈົ່ງ ເບິ່ງ, ຕາມ ຄວາມ ຈິງ ແລ້ວ ເຮົາກ່າວ ກັບພວກເຈົ້າວ່າ ຄົນໃດກໍຕາມໃນບັນດາພວກເຈົ້າທີ່ເລີກກັບຄູ່ຄອງຂອງຕົນເພາະ [ກ]ການລ່ວງປະເວນີ, ຫລື ອີກຄຳໜຶ່ງ, ຖ້າຫາກເຂົາເປັນພະຍານຢູ່ຕໍ່ໜ້າພວກເຈົ້າດ້ວຍຄວາມຕ່ຳຕ້ອຍໃນໃຈວ່າ ສະຖານະການເປັນເຊັ່ນນັ້ນ, ແລ້ວພວກເຈົ້າຈະບໍ່ຂັບໄລ່ເຂົາອອກໄປຈາກບັນດາພວກເຈົ້າ;

75 ແຕ່ ຖ້າຫາກພວກເຈົ້າພົບເຫັນຄົນໃດຄົນໜຶ່ງປະຖິ້ມຄູ່ຄອງໄປເນື່ອງດ້ວຍ [ກ]ການຫລິ້ນຊູ້, ແລະ ເຂົາເອງເປັນຄົນກະທຳຄວາມຜິດ, ແລະ ຄູ່ຄອງຂອງເຂົາຍັງມີຊີວິດຢູ່, ແລ້ວເຂົາຈະຖືກຂັບ [ຂ]ໄລ່ອອກໄປຈາກບັນດາພວກເຈົ້າ.

76 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກເຈົ້າວ່າ ຈົ່ງ [ກ]ເຝົ້າລະວັງ ແລະ ລະມັດລະວັງ, ດ້ວຍການສອບຖາມຢ່າງລະອຽດທຸກຢ່າງ, ວ່າພວກເຈົ້າຈະບໍ່ຮັບເອົາຄົນເຊັ່ນນັ້ນເຂົ້າມາໃນບັນດາພວກເຈົ້າ ຖ້າເຂົາແຕ່ງງານແລ້ວ;

77 ແລະ ຖ້າຫາກເຂົາບໍ່ໄດ້ແຕ່ງງານ, ເຂົາຈະຕ້ອງກັບໃຈຈາກບາບທັງໝົດຂອງເຂົາ ຖ້າບໍ່ດັ່ງນັ້ນພວກເຈົ້າຢ່າໄດ້ຮັບເອົາເຂົາ.

78 ແລະ ອີກເທື່ອໜຶ່ງ, ທຸກຄົນທີ່ເປັນຂອງສາດສະໜາຈັກນີ້ຂອງພຣະຄຣິດ, ຈະຍຶດຖືທີ່ຈະຮັກສາພຣະບັນຍັດ ແລະ ພັນທະສັນຍາທັງໝົດຂອງສາດສະໜາຈັກ.

79 ແລະ ເຫດການຈະບັງເກີດຂຶ້ນຄື ຖ້າຫາກຄົນໃດຄົນໜຶ່ງໃນບັນດາພວກເຈົ້າໄດ້ [ກ]ຂ້າຄົນ ເຂົາຈະຖືກສົ່ງໄປ ແລະ ຖືກດຳເນີນການຕາມກົດໝາຍຂອງແຜ່ນດິນ; ຈົ່ງຈຳໄວ້ວ່າເຂົາຈະບໍ່ໄດ້ຮັບການໃຫ້ອະໄພ; ແລະ ຈະໄດ້ຮັບການພິສູດຄະດີຕາມກົດໝາຍຂອງແຜ່ນດິນ.

80 ແລະ ຖ້າຫາກຜູ້ຊາຍ ຫລື ຜູ້ຍິງຄົນໃດຫລິ້ນຊູ້, ເຂົາຈະຖືກສອບສວນໂດຍແອວເດີຂອງສາດສະໜາຈັກສອງຄົນ, ຫລືຫລາຍກວ່ານັ້ນ, ແລະ ທຸກຄຳຈະຖືກຕັ້ງໄວ້ເພື່ອກ່າວຫາເຂົາໂດຍພະຍານຂອງສາດສະໜາຈັກສອງຄົນ, ແລະ ບໍ່ແມ່ນຂອງສັດຕູ; ແຕ່ຖ້າຫາກມີພະຍານຫລາຍກວ່າສອງຄົນຈະດີກວ່າ.

81 ແຕ່ເຂົາຈະຖືກກ່າວໂທດໂດຍປາກຂອງພະຍານສອງຄົນ; ແລະ ແອວເດີຈະສະເໜີເລື່ອງນັ້ນຢູ່ຕໍ່ໜ້າສາດສະໜາຈັກ, ແລະ ສາດສະໜາຈັກຈະຍົກມືຂຶ້ນສະໜັບສະໜູນຂໍ້ກ່າວຫາເຂົາ, ເພື່ອວ່າເຂົາຈະຖືກດຳເນີນຕາມກົດຂອງພຣະເຈົ້າ.

82 ແລະ ຖ້າຫາກເປັນໄປໄດ້, ກໍຈຳເປັນທີ່ອະທິການຈະມີໜ້າຢູ່ທີ່ນັ້ນດ້ວຍ.

83 ແລະ ຈົ່ງຈັດການກັບທຸກກໍລະນີດັ່ງນີ້ຊຶ່ງຈະມາຢູ່ຕໍ່ໜ້າພວກເຈົ້າ.

74 *ກ* ຄມພ ການຂາດສິນທຳທາງເພດ; ການລ່ວງປະເວນີ.
75 *ກ* ຄມພ ຫລິ້ນຊູ້.
*ຂ* ຄມພ ການຖືກໄລ່ອອກ.
76 *ກ* ຄມພ ຍາມ, ຄົນຍາມ.
79 *ກ* ຄມພ ຄາດຕະກຳ, ການຄາດຕະກຳ.

84 ແລະ ຖ້າຊາຍ ຫລື ຍິງຄົນໃດປຸ້ນສະດົມ, ເຂົາຈະຖືກສົ່ງໄປ ຫາກົດໝາຍຂອງແຜ່ນດິນ.

85 ແລະ ຖ້າຫາກເຂົາ [ກ]ລັກ, ເຂົາຈະຖືກສົ່ງໄປຫາກົດໝາຍຂອງແຜ່ນດິນ.

86 ແລະ ຖ້າ ຫາກ ເຂົາ [ກ]ຕົວະ, ເຂົາຈະຖືກສົ່ງໄປຫາກົດໝາຍຂອງແຜ່ນດິນ.

87 ແລະ ຖ້າ ຫາກ ເຂົາເຮັດຄວາມຊົ່ວຮ້າຍໃດໆ, ເຂົາຈະຖືກສົ່ງໄປຫາກົດໝາຍ, ແມ່ນແຕ່ກົດໝາຍຂອງພຣະເຈົ້າ.

88 ແລະ ຖ້າຫາກ [ກ]ອ້າຍເອື້ອຍນ້ອງຂອງເຈົ້າໄດ້ [ຂ]ເຮັດຜິດຕໍ່ເຈົ້າ, ໃຫ້ເຈົ້າພາເຂົາໄປເຈົ້າກັບເຂົາເທົ່ານັ້ນຢູ່ຕາມລຳພັງ; ແລະຖ້າຫາກເຂົາ [ຄ]ສາລະພາບ ໃຫ້ເຈົ້າຄືນດີກັບເຂົາ.

89 ແລະ ຖ້າຫາກເຂົາບໍ່ສາລະພາບ ໃຫ້ເຈົ້າສົ່ງເຂົາໄປຫາສາດສະໜາຈັກ, ບໍ່ແມ່ນຫາສະມາຊິກ, ແຕ່ໄປຫາພວກແອວເດີ. ແລະ ມັນຈະຖືກດຳເນີນໃນການປະຊຸມ, ແລະ ບໍ່ແມ່ນຢູ່ຕໍ່ໜ້າໂລກ.

90 ແລະ ຖ້າຫາກອ້າຍເອື້ອຍນ້ອງຂອງເຈົ້າເຮັດຜິດຕໍ່ຫລາຍຄົນ, ເຂົາຈະຕ້ອງຖືກ [ກ]ຕີສອນຢູ່ຕໍ່ໜ້າຫລາຍຄົນ.

91 ແລະ ຖ້າຫາກຄົນໃດເຮັດຜິດຢ່າງເປີດເຜີຍ, ເຂົາຈະຖືກຕິຕຽນຢ່າງເປີດເຜີຍ, ເພື່ອວ່າເຂົາຈະໄດ້ອັບອາຍ. ແລະ ຖ້າຫາກເຂົາບໍ່ສາລະພາບ, ເຂົາຈະຖືກສົ່ງໄປຫາກົດໝາຍຂອງພຣະເຈົ້າ.

92 ຖ້າຫາກຄົນໃດເຮັດຜິດໃນບ່ອນລັບລີ້, ເຂົາຈະຖືກຕິຕຽນໃນບ່ອນລັບລີ້, ເພື່ອວ່າເຂົາຈະໄດ້ມີໂອກາດສາລະພາບໃນບ່ອນລັບລີ້ກັບຄົນທີ່ເຂົາໄດ້ເຮັດຜິດຕໍ່, ແລະ ກັບພຣະເຈົ້າ, ເພື່ອວ່າສາດສະໜາຈັກຈະບໍ່ໄດ້ກ່າວຄຳເວົ້າຕຳນິໃສ່ເຂົາ.

93 ແລະ ພວກເຈົ້າຈະດຳເນີນການດັ່ງນັ້ນໃນທຸກສິ່ງ.

## ພາກທີ 43

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ໃນເດືອນກຸມພາ 1831. ໃນເວລານີ້ສະມາຊິກຂອງສາດສະໜາຈັກບາງຄົນວຸ້ນວາຍໃຈເພາະມີຄົນອ້າງຕົນວ່າເປັນຜູ້ເປີດເຜີຍ. ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການສື່ສານນີ້ເຖິງພວກແອວເດີຂອງສາດສະໜາຈັກ. ສ່ວນທຳອິດແມ່ນກ່ຽວກັບເລື່ອງການປົກຄອງສາດສະໜາຈັກ; ສ່ວນຕໍ່ໄປບັນຈຸການເຕືອນວ່າ ແອວເດີຕ້ອງມອບໃຫ້ແກ່ປະຊາຊາດຂອງແຜ່ນດິນໂລກ.*

*1–7, ການເປີດເຜີຍ ແລະ ພຣະບັນຍັດ ມາເຖິງພຽງແຕ່ຜ່ານຜູ້ທີ່ຖືກແຕ່ງຕັ້ງໄວ້ເທົ່ານັ້ນ; 8–14, ໄພ່ພົນຂອງພຣະເຈົ້າໄດ້ຮັບການຊຳລະໃຫ້ບໍລິສຸດ ໂດຍການເຮັດໃນຄວາມບໍລິສຸດທຸກຢ່າງຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ; 15–22, ແອວເດີໄດ້ຖືກສົ່ງອອກໄປເພື່ອເອີ້ນປະກາດການກັບໃຈ ແລະ ຕຽມມະນຸດສຳລັບວັນທີ່ຍິ່ງໃຫຍ່*

85 *ກ* ຄມພ ລັກ, ການລັກ.
86 *ກ* ຄມພ ຊື່ສັດ, ຄວາມຊື່ສັດ; ຕົວະ.
88 *ກ* ຄມພ ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ; ເອື້ອຍນ້ອງ.
*ຂ* ມທ 18:15–17.
*ຄ* ຄມພ ສາລະພາບ, ການສາລະພາບ.
90 *ກ* ຄມພ ຕີສອນ, ການຕີສອນ.

*ຂອງພຣະຜູ້ເປັນເຈົ້າ; 23–28, ພຣະຜູ້ເປັນ
ເຈົ້າເອີ້ນມະນຸດ ໂດຍສຸລະສຽງຂອງພຣະ
ອົງເອງ ແລະ ຜ່ານພະລັງທຳມະຊາດ; 29–
35, ຊ່ວງໄລຍະພັນປີ ແລະ ການຜູກມັດ
ຊາຕານ ຈະເກີດຂຶ້ນ.*

1 ໂອ້ ຈົ່ງເຊື່ອຟັງ, ພວກເຈົ້າແອວເດີຂອງ
ສາດສະໜາຈັກຂອງເຮົາ, ແລະ ງ່ຽງຫູຟັງ
ຖ້ອຍຄຳ ຊຶ່ງເຮົາຈະກ່າວກັບພວກເຈົ້າ.
2 ເພາະຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ,
ເຮົາກ່າວກັບພວກເຈົ້າ, ວ່າພວກເຈົ້າໄດ້ຮັບ
ບັນຍັດຂໍ້ໜຶ່ງໄວ້ເປັນ [ກ]ກົດສຳລັບສາດສະ
ໜາຈັກຂອງເຮົາ, ໂດຍຜ່ານຄົນທີ່ເຮົາໄດ້
ແຕ່ງຕັ້ງໄວ້ໃຫ້ແກ່ພວກເຈົ້າ ເພື່ອຈະໄດ້ຮັບ
[ຂ]ບັນຍັດ ແລະ ການເປີດເຜີຍຈາກມືຂອງ
ເຮົາ.
3 ແລະ ການນີ້ພວກເຈົ້າຈະຮູ້ຢ່າງແນ່
ນອນ—ບໍ່ມີຄົນອື່ນໄດ້ຖືກກຳນົດໃຫ້ແກ່
ພວກເຈົ້າ ເພື່ອຮັບບັນຍັດ ແລະ ການເປີດ
ເຜີຍ ຈົນກວ່າເຂົາຈະຖືກຮັບເອົາໄປ, ຖ້າ
ຫາກເຂົາ [ກ]ແນບສະໜິດຢູ່ໃນເຮົາ.
4 ແຕ່ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວ
ກັບເຈົ້າ, ວ່າ [ກ]ບໍ່ມີຄົນໃດຈະຖືກກຳນົດສຳ
ລັບຂອງປະທານນີ້ ຍົກເວັ້ນແຕ່ຈະເປັນ
ຜ່ານເຂົາ; ເພາະຖ້າຫາກມັນຖືກເອົາໄປ
ຈາກເຂົາ, ເຂົາຈະບໍ່ມີອຳນາດອີກຍົກເວັ້ນ
ແຕ່ຈະກຳນົດຄົນອື່ນແທນເຂົາ.
5 ແລະ ນີ້ຈະເປັນກົດຂໍ້ໜຶ່ງແກ່ພວກ
ເຈົ້າ, ວ່າພວກເຈົ້າຈະບໍ່ຮັບເອົາຄຳ
ສອນ ຈາກຄົນໃດທີ່ມາຫາພວກເຈົ້າ
ວ່າເປັນການເປີດເຜີຍ ຫລື ບັນຍັດ;
6 ແລະ ສິ່ງນີ້ເຮົາມອບໃຫ້ແກ່ພວກເຈົ້າ
ເພື່ອວ່າພວກເຈົ້າຈະບໍ່ຖືກ [ກ]ຫລອກ, ເພື່ອ
ວ່າພວກເຈົ້າຈະຮູ້ວ່າ ມັນບໍ່ໄດ້ມາຈາກເຮົາ.
7 ເພາະຕາມຄວາມຈິງ ເຮົາກ່າວກັບ
ພວກເຈົ້າວ່າ ຄົນທີ່ໄດ້ຮັບການ [ກ]ແຕ່ງຕັ້ງ
ຈາກເຮົາ ຈະເຂົ້າມາທາງ [ຂ]ປະຕູ ແລະ
ຮັບການແຕ່ງຕັ້ງດັ່ງທີ່ເຮົາໄດ້ບອກພວກ
ເຈົ້າມາກ່ອນ, ເພື່ອສິດສອນການເປີດເຜີຍ
ເຫລົ່ານັ້ນ ຊຶ່ງພວກເຈົ້າໄດ້ຮັບ ແລະ ຈະໄດ້
ຮັບຜ່ານຄົນທີ່ເຮົາກຳນົດໄວ້.
8 ແລະ ບັດນີ້, ຈົ່ງເບິ່ງ, ເຮົາມອບບັນຍັດ
ຂໍ້ໜຶ່ງໃຫ້ແກ່ພວກເຈົ້າ, ຄືເມື່ອພວກເຈົ້າມາ
ຊຸມນຸມກັນ ພວກເຈົ້າຈະ [ກ]ແນະນຳ ແລະ
ສິດສອນກັນ, ເພື່ອວ່າພວກເຈົ້າຈະຮູ້ວິທີທີ່
ຈະປະຕິບັດ ແລະ ນຳພາສາດສະໜາຈັກ
ຂອງເຮົາ, ຮູ້ວິທີທີ່ຈະກະທຳຕາມຈຸດຕ່າງໆ
ຂອງກົດ ແລະ ບັນຍັດຂອງເຮົາ, ຊຶ່ງເຮົາໄດ້
ມອບໃຫ້.
9 ແລະ ດັ່ງນັ້ນພວກເຈົ້າຈະເປັນຜູ້ໄດ້ຮັບ
ຄຳແນະນຳກ່ຽວກັບກົດຂອງສາດສະໜາ
ຈັກຂອງເຮົາ, ແລະ ໄດ້ຮັບ [ກ]ການຊຳລະໃຫ້
ບໍລິສຸດໂດຍສິ່ງທີ່ພວກເຈົ້າໄດ້ຮັບ, ແລະ
ພວກເຈົ້າຈະຜູກມັດຕົວເອງທີ່ຈະກະທຳໃນ
ຄວາມສັກສິດທັງໝົດຢູ່ຕໍ່ໜ້າເຮົາ—
10 ຄືຕາບໃດທີ່ພວກເຈົ້າຍັງເຮັດສິ່ງນີ້,
ລັດສະໝີພາບຈະຖືກ [ກ]ຕື່ມໃສ່ອານາຈັກ
ຊຶ່ງພວກເຈົ້າໄດ້ຮັບ. ຕາບໃດທີ່ພວກເຈົ້າບໍ່
ເຮັດຕາມ, ມັນຈະຖືກ [ຂ]ເອົາໄປ, ແມ່ນແຕ່
ສິ່ງທີ່ພວກເຈົ້າໄດ້ຮັບ.

---

**43** 2 *ກ* ຄພ 42.
*ຂ* ຄມພ ເປີດເຜີຍ, ການເປີດເຜີຍ; ພຣະບັນຍັດຂອງພຣະເຈົ້າ.
3 *ກ* ຢຣ 15:4.
4 *ກ* ຄພ 28:2–3.
6 *ກ* ຄພ 46:7.
ຄມພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.
7 *ກ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* ມທ 7:13–14; 2 ນຟ 9:41; 31:9, 17–18; 3 ນຟ 14:13–14; ຄພ 22.
8 *ກ* ຄພ 88:77.
9 *ກ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
10 *ກ* ແອວ 12:10.
*ຂ* ມຣກ 4:25.

11 ຈົ່ງຊຳລະລ້າງ [ກ]ຄວາມຊົ່ວຮ້າຍຊຶ່ງຢູ່
ໃນບັນດາພວກເຈົ້າອອກໄປ; ຈົ່ງຊຳລະຕົນ
ເອງໃຫ້ບໍລິສຸດຢູ່ຕໍ່ໜ້າເຮົາ;

12 ແລະ ຖ້າຫາກພວກເຈົ້າປາດຖະໜາ
ລັດສະໝີພາບຂອງອານາຈັກ, ຈົ່ງກຳນົດ
ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ,
ແລະ [ກ]ສະໜັບສະໜູນລາວຢູ່ຕໍ່ໜ້າເຮົາ
ໂດຍການອະທິຖານດ້ວຍສັດທາ.

13 ແລະ ອີກ ເທື່ອ ໜຶ່ງ, ເຮົາກ່າວກັບ
ພວກເຈົ້າວ່າ ຖ້າຫາກພວກເຈົ້າປາດຖະ
ໜາ [ກ]ຄວາມລຶກລັບຂອງອານາຈັກ, ຈົ່ງຈັດ
ຫາອາຫານການກິນ ແລະ ເຄື່ອງນຸ່ງຫົ່ມໃຫ້
ລາວ, ແລະ ສິ່ງໃດກໍຕາມທີ່ລາວຕ້ອງການ
ເພື່ອຈະໄດ້ສຳເລັດວຽກງານຊຶ່ງເຮົາໄດ້ບັນ
ຊາລາວ;

14 ແລະ ຖ້າຫາກພວກເຈົ້າບໍ່ເຮັດສິ່ງນີ້
ລາວຈະຢູ່ກັບຄົນທີ່ຮັບເອົາລາວ, ເພື່ອວ່າ
ເຮົາຈະໄດ້ເກັບຜູ້ຄົນທີ່ [ກ]ບໍລິສຸດໄວ້ຕໍ່ໜ້າ
ເຮົາ.

15 ອີກ ເທື່ອ ໜຶ່ງ ເຮົາ ກ່າວ ວ່າ ຈົ່ງ ເຊື່ອ
ຟັງ ພວກເຈົ້າແອວເດີຂອງສາດສະໜາຈັກ
ຂອງເຮົາ, ຜູ້ຊຶ່ງເຮົາໄດ້ກຳນົດໄວ້: ພວກ
ເຈົ້າ ບໍ່ ໄດ້ ຖືກ ສົ່ງ ອອກ ໄປ ເພື່ອ ຮັບ ການ
ສິດສອນ, ແຕ່ເພື່ອ [ກ]ສິດສອນລູກຫລານ
ມະນຸດເຖິງສິ່ງທີ່ເຮົາໄດ້ວາງໄວ້ໃນມືຂອງ
ພວກເຈົ້າໂດຍອຳນາດຂອງ [ຂ]ພຣະວິນ
ຍານຂອງເຮົາ;

16 ແລະ ພວກເຈົ້າຈະໄດ້ຮັບ [ກ]ການສິດ
ສອນຈາກເບື້ອງບົນ. ຈົ່ງ [ຂ]ຊຳລະຕົນໃຫ້ບໍ
ລິສຸດ ແລ້ວພວກເຈົ້າຈະ [ຄ]ໄດ້ຮັບອຳນາດ,
ເພື່ອວ່າພວກເຈົ້າຈະໄດ້ມອບໃຫ້ແມ່ນແຕ່
ດັ່ງເຊັ່ນທີ່ເຮົາໄດ້ກ່າວ.

17 ພວກເຈົ້າຈົ່ງເຊື່ອຟັງ, ເພາະ, ຈົ່ງເບິ່ງ,
[ກ]ວັນ [ຂ]ອັນຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າໃກ້
ຈະມາເຖິງແລ້ວ.

18 ເພາະວັນນັ້ນຈະມາເຖິງເມື່ອພຣະຜູ້
ເປັນເຈົ້າຈະເອີ່ຍ [ກ]ສຽງຂອງພຣະອົງອອກ
ມາຈາກສະຫວັນ; ຟ້າສະຫວັນຈະ [ຂ]ສັ່ນ
ແລະ ແຜ່ນດິນໂລກຈະ [ຄ]ສະເທືອນ, ແລະ
[ງ]ແກຂອງພຣະເຈົ້າຈະສົ່ງສຽງອັນຍາວນານ
ແລະ ດັງກ້ອງ, ແລະ ຈະກ່າວກັບປະຊາ
ຊາດທີ່ຫລັບຢູ່ວ່າ: ໄພ່ພົນຂອງພຣະເຈົ້າ
ເອີຍ ຈົ່ງ [ຈ]ລຸກຂຶ້ນ ແລະ ມີຊີວິດ; ສ່ວນພວກ
ເຈົ້າ ຄົນບາບ ໃຫ້ [ສ]ຢູ່ເສີຍ ແລະ [ຊ]ຫລັບຢູ່
ຈົນກວ່າເຮົາຈະເອີ້ນອີກ.

19 ດັ່ງນັ້ນ ຈົ່ງຄາດແອວຂອງພວກເຈົ້າ
ຖ້າບໍ່ດັ່ງນັ້ນພວກເຈົ້າຈະຖືກພົບເຫັນຢູ່ໃນ
ບັນດາຄົນຊົ່ວ.

20 ຈົ່ງເປັ່ງສຽງຂອງພວກເຈົ້າ ແລະ ຢ່າ
ຢັບຢັ້ງໄວ້ເລີຍ. ຈົ່ງເອີ້ນໃຫ້ປະຊາຊາດກັບ
ໃຈ, ທັງຄົນແກ່ ແລະ ຄົນໜຸ່ມ, ທັງຂ້າທາດ
ແລະ ທັງຜູ້ເປັນອິດສະລະ, ໂດຍກ່າວວ່າ:
ຈົ່ງຕຽມຕົວເອງສຳລັບວັນອັນຍິ່ງໃຫຍ່ຂອງ
ພຣະຜູ້ເປັນເຈົ້າ;

---

11 *ກ* ຄມພ ບາບ.
12 *ກ* ຄມພ ການສະໜັບສະໜູນ ຜູ້ນຳຂອງສາດສະໜາຈັກ.
13 *ກ* ຄມພ ຄວາມລຶກລັບ ຂອງພຣະເຈົ້າ.
14 *ກ* ຄມພ ບໍລິສຸດ, ຜູ້ບໍລິ ສຸດ, ຄວາມບໍລິສຸດ.
15 *ກ* ຄມພ ວຽກງານເຜີຍແຜ່.
*ຂ* ຄມພ ສອນ, ຜູ້ສອນ, ຄູສອນ—ການສອນ ດ້ວຍພຣະວິນຍານ.
16 *ກ* ຄມພ ດົນໃຈ, ການດົນໃຈ.
*ຂ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຄ* ລກ 24:49; ຄພ 38:32; 95:8–9; 110:8–10.
17 *ກ* ຄພ 29:8. ຄມພ ການສະເດັດມາຄັ້ງທີ ສອງຂອງພຣະເຢຊູຄຣິດ.
*ຂ* ມລກ 4:5; ຄພ 2:1; 34:6–9.
18 *ກ* ຢອ 2:11; ຄພ 133:50.
*ຂ* ຢອ 2:10; 3:16; ຄພ 45:48.
*ຄ* ຄພ 88:87.
*ງ* ຄພ 29:13; 45:45.
*ຈ* ຄມພ ການຟື້ນຄືນພຣະ ຊົນ, ການຟື້ນຄືນຊີວິດ.
*ສ* ຄພ 76:85; 88:100–101.
*ຊ* ມມ 9:13–14.

21 ເພາະ ເຮົາ, ຜູ້ ເປັນ ມະນຸດ, ເປັ່ງ ສຽງ
ຂອງເຮົາ ແລະ ເອີ້ນພວກເຈົ້າໃຫ້ກັບ ໃຈ,
ແລະ ພວກ ເຈົ້າ ກຽດຊັງເຮົາ, ແລ້ວພວກ
ເຈົ້າ ຈະ ວ່າ ແນວ ໃດ ເມື່ອ ວັນ ນັ້ນ ມາ ເຖິງ
ເມື່ອ [ກ]ຟ້າຮ້ອງຈະສົ່ງສຽງຂອງມັນຈາກທີ່
ສຸດຂອງແຜ່ນດິນໂລກ, ກ່າວໃສ່ຫູຂອງທຸກ
ຄົນທີ່ມີຊີວິດ, ໂດຍກ່າວວ່າ—ຈົ່ງກັບໃຈ,
ແລະ ຕຽມສຳລັບວັນອັນຍິ່ງໃຫຍ່ຂອງພຣະ
ຜູ້ເປັນເຈົ້າ?

22 ແທ້ຈິງແລ້ວ, ແລະ ອີກເທື່ອໜຶ່ງ, ເມື່ອ
ຟ້າ ແມບ ເຫລື້ອມຈະພຸ່ງອອກມາຈາກທິດ
ພາກ ຕາ ເວັນ ອອກ ຫາ ພາກ ຕາ ເວັນ ຕົກ,
ແລະ ຈະເປັ່ງສຽງຂອງມັນໃສ່ທຸກຄົນທີ່ມີຊີ
ວິດ, ແລະ ເຮັດໃຫ້ຫູຂອງທຸກຄົນມຶນ ແລະ
ໄດ້ຍິນ, ໂດຍກ່າວຖ້ອຍຄຳເຫລົ່ານີ້ວ່າ—
ພວກເຈົ້າຈົ່ງກັບໃຈ, ເພາະວັນອັນຍິ່ງໃຫຍ່
ຂອງພຣະຜູ້ເປັນເຈົ້າຈະມາເຖິງແລ້ວ?

23 ແລະ ອີກເທື່ອໜຶ່ງ, ພຣະຜູ້ເປັນເຈົ້າ
ຈະເປັ່ງສຽງຂອງພຣະອົງອອກມາຈາກ
ສະຫວັນ, ໂດຍກ່າວວ່າ: ຈົ່ງເຊື່ອຟັງ, ໂອ້
ພວກເຈົ້າປະຊາຊາດຂອງແຜ່ນດິນໂລກ,
ແລະ ຟັງພຣະຄຳຂອງພຣະເຈົ້າ ຜູ້ໄດ້ສ້າງ
ພວກເຈົ້າ.

24 ໂອ້, ພວກເຈົ້າປະຊາຊາດຂອງແຜ່ນ
ດິນໂລກ, ຈັກເທື່ອແລ້ວ ທີ່ເຮົາໄດ້ເຕົ້າໂຮມ
ພວກເຈົ້າດັ່ງ [ກ]ແມ່ໄກ່ເຕົ້າໂຮມລູກຂອງມັນ
ໄວ້ໃຕ້ປີກຂອງມັນ, ແຕ່ພວກເຈົ້າກໍ [ຂ]ບໍ່ຟັງ!

25 ຈັກເທື່ອແລ້ວ ທີ່ເຮົາໄດ້ [ກ]ເອີ້ນພວກ
ເຈົ້າ ໂດຍປາກຂອງ [ຂ]ຜູ້ຮັບໃຊ້ຂອງເຮົາ,
ແລະ ໂດຍ [ຄ]ການປະຕິບັດຂອງເຫລົ່າ
ທູດ, ແລະ ໂດຍສຽງຂອງເຮົາເອງ, ແລະ
ໂດຍສຽງຟ້າຮ້ອງ, ແລະ ໂດຍສຽງຟ້າແມບ
ເຫລື້ອມ, ແລະ ໂດຍສຽງພະຍຸຝົນຟ້າຄະ
ນອງ, ແລະ ໂດຍສຽງແຜ່ນດິນໄຫວ, ແລະ
ພະຍຸໝາກເຫັບໃຫຍ່, ແລະ ໂດຍສຽງ ຂອງ
[ງ]ຄວາມອຶດຢາກ ແລະ ພະຍາດໂລຄາທຸກ
ຊະນິດ, ແລະ ໂດຍສຽງແກອັນດັງ, ແລະ
ໂດຍສຽງຂອງການພິພາກສາ, ແລະ ໂດຍ
ສຽງຂອງ [ຈ]ຄວາມເມດຕາຕະຫລອດທັງ
ວັນ, ແລະ ໂດຍສຽງຂອງລັດສະໝີພາບ
ແລະ ກຽດຕິຍົດ ແລະ ຄວາມຮັ່ງມີແຫ່ງຊີ
ວິດນິລັນດອນ, ແລະ ອາດຊ່ວຍພວກເຈົ້າ
ໃຫ້ລອດດ້ວຍຄວາມລອດ [ສ]ອັນເປັນນິດ,
ແຕ່ພວກເຈົ້າກໍບໍ່ຟັງ!

26 ຈົ່ງເບິ່ງ, ວັນນັ້ນໄດ້ມາເຖິງແລ້ວ, ເມື່ອ
ຈອກ ແຫ່ງພຣະພິໂລດຂອງເຮົາເຕັມໄປ
ດ້ວຍຄວາມເຄືອງແຄ້ນ.

27 ຈົ່ງເບິ່ງ, ຕາມຄວາມຈິງ ເຮົາກ່າວກັບ
ພວກເຈົ້າວ່າ ນີ້ຄືພຣະຄຳຂອງພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ.

28 ດັ່ງນັ້ນ, ພວກ ເຈົ້າ ຈົ່ງ [ກ]ອອກ ແຮງ,
ພວກ ເຈົ້າ ຈົ່ງ ອອກ ແຮງ ໃນ ສວນ ອະງຸ່ນ
ຂອງ ເຮົາ ເປັນ ເທື່ອ ສຸດ ທ້າຍ—ເປັນ ເທື່ອ
ສຸດທ້າຍ ທີ່ຈະເອີ້ນຜູ້ອາໄສຂອງແຜ່ນດິນ
ໂລກ.

29 ເພາະ ໃນ ເວລາ ອັນ ເໝາະ ສົມ ຂອງ
ເຮົາ ເອງ, ເຮົາຈະ [ກ]ມາ ເທິງ ແຜ່ນດິນ ໂລກ
ໃນການພິພາກສາ, ແລະ ຜູ້ຄົນຂອງເຮົາ

21 *ກ* 2 ນຟ 27:2;
ຄພ 88:90.
24 *ກ* ມທ 23:37;
3 ນຟ 10:4–6.
*ຂ* ຄມພ ກະບົດ, ການກະບົດ.
25 *ກ* ຮລມ 12:2–4.
*ຂ* ມທ 23:34.
ຄມພ ສາດສະດາ.
*ຄ* ຄພ 7:6; 130:4–5.
*ງ* ຍມຍ 24:10;
ອມ 4:6;
ຄພ 87:6;
ຈສ—ມ 1:29.
*ຈ* ຄມພ ເມດຕາ, ມີເມດ
ຕາ, ຄວາມເມດຕາ.
*ສ* ຄມພ ຊີວິດນິລັນດອນ;
ລອດ, ຄວາມລອດ;
ອະມະຕະ, ຄວາມ
ເປັນອະມະຕະ.
28 *ກ* ຢຄ 5:71; ຄພ 33:3.
ຄມພ ສວນອະງຸ່ນຂອງ
ພຣະຜູ້ເປັນເຈົ້າ.
29 *ກ* ຄມພ ການສະເດັດມາຄັ້ງທີ
ສອງຂອງພຣະເຢຊູຄຣິດ.

ຈະ ໄດ້ຮັບ ການ ໄຖ່ ແລະ ຈະປົກຄອງນຳ
ເຮົາຢູ່ເທິງແຜ່ນດິນໂລກ.
30 ເພາະ ໃນ ຊ່ວງ ໄລຍະ [ກ]ພັນປີອັນຍິ່ງ
ໃຫຍ່, ຊຶ່ງເຮົາໄດ້ກ່າວໂດຍປາກຂອງຜູ້ຮັບ
ໃຊ້ຂອງເຮົາ, ຈະມາເຖິງ.
31 ເພາະ [ກ]ຊາຕານຈະຖືກ [ຂ]ມັດໄວ້, ແລະ
ເມື່ອມັນຖືກປ່ອຍ ໄປອີກ ມັນຈະປົກຄອງ
[ຄ]ຊົ່ວໄລຍະໜຶ່ງ, ແລະ ຈາກນັ້ນ [ງ]ທີ່ສຸດຂອງ
ແຜ່ນດິນໂລກຈະມາເຖິງ.
32 ແລະ ຄົນທີ່ດຳລົງຊີວິດໃນ [ກ]ຄວາມ
ຊອບທຳຈະ [ຂ]ປ່ຽນໄປໃນພິບຕາດຽວ, ແລະ
ແຜ່ນ ດິນ ໂລກ ຈະ ສູນ ສິ້ນ ໄປ ເໝືອນດັ່ງ
ດ້ວຍໄຟ.
33 ແລະ ຄົນຊົ່ວຈະອອກໄປສູ່ [ກ]ໄຟທີ່ບໍ່
ຮູ້ມອດ, ແລະ ຈຸດຈົບຂອງເຂົາບໍ່ມີຄົນໃດຮູ້
ຢູ່ໃນແຜ່ນດິນໂລກ, ທັງບໍ່ມີວັນທີ່ຈະຮູ້, ຈົນ
ກວ່າເຂົາມາຢູ່ຕໍ່ໜ້າເຮົາໃນ [ຂ]ການພິພາກ
ສາ.
34 ພວກເຈົ້າຈົ່ງເຊື່ອຟັງຖ້ອຍຄຳເຫລົ່າ
ນີ້. ຈົ່ງເບິ່ງ, ເຮົາຄືພຣະເຢຊູຄຣິດ, [ກ]ພຣະຜູ້
ຊ່ວຍໃຫ້ລອດຂອງໂລກ. ຈົ່ງ [ຂ]ສະສົມເລື່ອງ
ເຫລົ່ານີ້ໄວ້ໃນໃຈຂອງພວກເຈົ້າ, ແລະ ໃຫ້
[ຄ]ຄວາມນອບນ້ອມແຫ່ງຊົ່ວນິລັນດອນ [ງ]ຢູ່
ໃນ [ຈ]ຈິດໃຈຂອງພວກເຈົ້າ.
35 ຈົ່ງ [ກ]ມີ ສະຕິ. ຈົ່ງຮັກສາບັນຍັດທັງ
ໝົດຂອງເຮົາ. ແມ່ນເປັນດັ່ງນັ້ນ. ອາແມນ.

---

# ພາກທີ 44

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ໃນທ້າຍເດືອນກຸມພາ 1831. ເພື່ອເຮັດໃຫ້ເປັນໄປຕາມຂໍ້ກຳນົດທີ່ຕັ້ງໄວ້ໃນນີ້, ສາດສະໜາຈັກໄດ້ກຳນົດໃຫ້ຈັດກອງປະຊຸມໃຫຍ່ຂຶ້ນໃນຕົ້ນເດືອນມິຖຸນາທີ່ຈະມາເຖິງນັ້ນ.*

*1–3, ພວກແອວເດີຕ້ອງໄປຊຸມນຸມກັນໃນກອງປະຊຸມໃຫຍ່; 4–6, ເຂົາເຈົ້າຕ້ອງວາງລະບຽບຕາມກົດໝາຍຂອງແຜ່ນດິນ ແລະ ດູແລຄົນຍາກຈົນ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ພວກເຈົ້າຜູ້ຮັບໃຊ້ຂອງເຮົາດັ່ງນີ້, ເຮົາເຫັນ
ສົມຄວນທີ່ພວກແອວເດີຂອງສາດສະໜາ
ຈັກຂອງເຮົາຄວນຖືກເອີ້ນໃຫ້ມາຮ່ວມກັນ,
ຈາກທິດຕາເວັນອອກ ແລະ ຈາກທິດຕາ
ເວັນຕົກ, ແລະ ຈາກທິດເໜືອ ແລະ ຈາກ
ທິດໃຕ້, ໂດຍຈົດໝາຍ ຫລື ໂດຍວິທີອື່ນ.
2 ແລະ ເຫດການຈະບັງເກີດຂຶ້ນຄື ຕາບ
ໃດທີ່ພວກເຂົາຍັງຊື່ສັດ, ແລະ ໃຊ້ສັດທາ

---

30 *ກ* ຄມພ ພັນປີ.
31 *ກ* 1 ນຟ 22:26.
ຄມພ ມານ.
*ຂ* ຄພ 45:55; 84:100; 88:110.
*ຄ* ພນມ 20:3; ຢຄ 5:77; ຄພ 29:22.
*ງ* ຄມພ ໂລກ—ທີ່ສຸດຂອງໂລກ.
32 *ກ* ຄມພ ຊອບທຳ, ຄວາມຊອບທຳ.
*ຂ* 1 ກຣທ 15:51–52; ຄພ 63:51; 101:31.
ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
33 *ກ* ມທ 3:12.
*ຂ* ຄມພ ພຣະເຢຊູຄຣິດ—ພິພາກສາ.
34 *ກ* ຄມພ ພຣະຜູ້ຊ່ວຍໃຫ້ລອດ.
*ຂ* ຈສ—ມ 1:37.
*ຄ* ຄພ 84:61; 100:7–8.
*ງ* ຄມພ ໄຕ່ຕອງ.
*ຈ* ຄມພ ຈິດໃຈ.
35 *ກ* ຣມ 12:3; ຄພ 18:21.

ໃນເຮົາ, ເຮົາຈະຖອກເທ [ກ]ພຣະວິນຍານ
ຂອງ ເຮົາ ລົງ ມາ ເທິງພວກເຂົາ ໃນວັນທີ່
ພວກເຂົາມາຮ່ວມຊຸມນຸມກັນ.
3 ແລະ ເຫດການຈະບັງເກີດຂຶ້ນຄື ພວກ
ເຂົາຈະອອກໄປໃນພາກພື້ນຕ່າງໆທີ່ອ້ອມ
ຮອບ, ແລະ [ກ]ສັ່ງສອນເຖິງການກັບໃຈໃຫ້
ແກ່ຜູ້ຄົນ.
4 ແລະ ຫລາຍຄົນຈະ [ກ]ປ່ຽນໃຈເຫລື້ອມ
ໃສ, ເຖິງຂະໜາດທີ່ພວກເຈົ້າຈະໄດ້ຮັບ
ຄວາມ ສາ ມາດ ມາຈັດລະບຽບ ຕົນເອງ
[ຂ]ຕາມກົດຂອງມະນຸດ;
5 ເພື່ອ ວ່າ [ກ]ສັດຕູຂອງພວກເຈົ້າຈະບໍ່
ມີຄວາມສາມາດເໜືອພວກເຈົ້າ; ເພື່ອວ່າ
ພວກເຈົ້າຈະໄດ້ຮັບການປົກປັກຮັກສາໃນ
ທຸກສິ່ງທັງປວງ; ເພື່ອວ່າພວກເຈົ້າຈະສາ
ມາດຮັກສາກົດຂອງເຮົາ; ເພື່ອວ່າພັນທະ
ທັງໝົດທີ່ສັດຕູພະຍາຍາມໃຊ້ເພື່ອທຳລາຍ
ຜູ້ຄົນຂອງເຮົາຈະຫລຸດໄປ.
6 ຈົ່ງ ເບິ່ງ, ເຮົາກ່າວກັບພວກເຈົ້າວ່າ
ພວກເຈົ້າຕ້ອງໄປ [ກ]ຢ້ຽມຢາມຄົນຍາກຈົນ
ແລະ ຄົນຂັດສົນ ແລະ ຊ່ວຍສົງເຄາະເຂົາ,
ເພື່ອວ່າເຂົາຈະໄດ້ຮັບການດູແລ ຈົນກວ່າ
ທຸກສິ່ງຈະຖືກກະທຳຕາມກົດຂອງເຮົາ ຊຶ່ງ
ພວກເຈົ້າໄດ້ຮັບ. ອາແມນ.

## ພາກທີ 45

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ສາດສະໜາຈັກ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 7 ເດືອນມີນາ, 1831. ໃນບົດຄຳນຳຂອງການບັນທຶກຕໍ່ການເປີດເຜີຍນີ້, ປະຫວັດຂອງໂຈເຊັບ ສະມິດກ່າວວ່າ "ໃນຍຸກນີ້ຂອງສາດສະໜາຈັກ . . . ມີການລາຍງານເທັດ . . . ແລະ ເລື່ອງໂງ່ຈ້າຫລາຍຢ່າງຖືກພິມອອກມາ . . . ແລະ ແຜ່ຂ່າວໄປທົ່ວ, . . . ເພື່ອກີດກັນຜູ້ຄົນບໍ່ໃຫ້ສົນໃຈວຽກງານ, ຫລື ຮັບເອົາຄວາມເຊື່ອ. . . . ແຕ່ໄພ່ພົນຂອງພຣະເຈົ້າຊື່ນຊົມ, . . . ເພາະຂ້າພະເຈົ້າໄດ້ຮັບດັ່ງຕໍ່ໄປນີ້."*

*1–5, ພຣະຄຣິດເປັນຜູ້ວິງວອນແທນພວກເຮົານຳພຣະບິດາ; 6–10, ພຣະກິດຕິຄຸນເປັນຜູ້ສົ່ງຂ່າວທີ່ຕຽມທາງໄວ້ກ່ອນພຣະຜູ້ເປັນເຈົ້າ; 11–15, ເອນົກ ແລະ ພີ່ນ້ອງຂອງເພິ່ນຖືກຮັບໄປຢູ່ນຳພຣະຜູ້ເປັນເຈົ້າ; 16–23, ພຣະຄຣິດເປີດເຜີຍເຄື່ອງໝາຍແຫ່ງການມາຂອງພຣະອົງດັ່ງທີ່ໃຫ້ໄວ້ຢູ່ພູໝາກກອກເທດ; 24–38, ພຣະກິດຕິຄຸນຈະຖືກຟື້ນຟູຄືນມາໃໝ່, ເວລາຂອງຄົນຕ່າງຊາດຈະສິ້ນສຸດ, ແລະ ໂຣກພະຍາດແຫ່ງຄວາມພິນາດຈະປົກຄຸມແຜ່ນດິນ; 39–47, ເຄື່ອງໝາຍ, ການມະຫັດສະຈັນ, ແລະ ການຟື້ນຄືນຊີວິດຈະເກີດຂຶ້ນພ້ອມກັບການສະເດັດມາຄັ້ງທີສອງ; 48–53, ພຣະຄຣິດຈະຢືນຢູ່ເທິງພູໝາກກອກເທດ, ແລະ ຊາວຢິວຈະເຫັນຮອຍແຜໃນພຣະຫັດ ແລະ ພຣະບາດຂອງພຣະອົງ; 54–59, ພຣະຜູ້ເປັນເຈົ້າຈະປົກຄອງໃນຊ່ວງໄລຍະພັນປີ; 60–62, ສາດສະດາໄດ້ຖືກແນະນຳໃຫ້ເລີ່ມຕົ້ນການແປພຣະຄຳພີໃໝ່, ຊຶ່ງຜ່ານວຽກງານ*

**44** 2*ກ* ກຈກ 2:17.
3*ກ* ຄມພ ສັ່ງສອນ.
4*ກ* ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
*ຂ* ຄພ 98:5–7.
5*ກ* 2 ນຟ 4:33.
6*ກ* ຢກບ 1:27.
ຄມພ ຄວາມຜາສຸກ; ເມດຕາສົງສານ, ຄວາມເມດຕາສົງສານ.

*ນັ້ນຂໍ້ມູນອັນສຳຄັນຈະຖືກເຮັດໃຫ້ເປັນທີ່ຮູ້ ຈັກ; 63–75, ໄພ່ພົນຂອງພຣະເຈົ້າຖືກບັນ ຊາໃຫ້ໄປເຕົ້າໂຮມກັນ ແລະ ສ້າງສາເຢຣູ ຊາເລັມໃໝ່, ຊຶ່ງຜູ້ຄົນຈາກປະຊາຊາດທັງ ຫລາຍຈະມາຫາທີ່ນັ້ນ.*

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າຜູ້ຄົນແຫ່ງ
[ກ]ສາດສະໜາຈັກຂອງເຮົາ, ຜູ້ຊຶ່ງ [ຂ]ອານາ
ຈັກຖືກມອບໃຫ້; ຈົ່ງເຊື່ອຟັງ ແລະ ຈົ່ງງ່ຽງຫູ
ຟັງຜູ້ໄດ້ວາງຮາກຖານຂອງແຜ່ນດິນໂລກ,
ຜູ້ໄດ້ [ຄ]ສ້າງຟ້າສະຫວັນ ແລະ ໄພ່ພົນທັງ
ໝົດໃນນັ້ນ, ແລະ ໂດຍພຣະອົງທຸກສິ່ງທັງ
ປວງໄດ້ຖືກສ້າງມາຊຶ່ງມີຊີວິດ, ແລະ ເຄື່ອນ
ໄຫວ, ແລະ ດຳລົງຢູ່.
2 ແລະ ອີກເທື່ອໜຶ່ງ ເຮົາກ່າວວ່າ ຈົ່ງ
ເຊື່ອຟັງສຽງຂອງເຮົາ, ຖ້າບໍ່ດັ່ງນັ້ນ [ກ]ຄວາມ
ຕາຍຈະນຳມາທັນພວກເຈົ້າ; ໃນ [ຂ]ຊົ່ວໂມງ
ທີ່ພວກເຈົ້າບໍ່ຄິດລະດູຮ້ອນຈະຜ່ານໄປ,
ແລະ ການ [ຄ]ເກັບກ່ຽວສິ້ນສຸດລົງແລ້ວ,
ແລະ ຈິດວິນຍານຂອງພວກເຈົ້າບໍ່ລອດ.
3 ຈົ່ງຟັງພຣະອົງ [ກ]ຜູ້ວິງວອນແທນພວກ
ເຈົ້ານຳພຣະບິດາ, ຜູ້ອ້ອນວອນແກ້ຕາງ
ພວກເຈົ້ານຳພຣະອົງ—
4 ມີຄວາມວ່າ: ພຣະບິດາເອີຍ, ຈົ່ງເບິ່ງ
[ກ]ຄວາມທຸກທໍລະມານ ແລະ ຄວາມຕາຍ
ຂອງຄົນທີ່ບໍ່ໄດ້ເຮັດ [ຂ]ບາບ, ຜູ້ຊຶ່ງ ພຣະອົງ
ພໍພຣະໄທຫລາຍ; ຂໍພຣະອົງຈົ່ງເບິ່ງໂລ
ຫິດຂອງບຸດຂອງພຣະອົງທີ່ໄດ້ຫລັ່ງໄຫລ,
ໂລຫິດຂອງຜູ້ທີ່ພຣະອົງໄດ້ມອບໃຫ້ ເພື່ອ
ພຣະອົງເອງຈະໄດ້ຮັບ [ຄ]ສະຫງ່າລາສີ;
5 ດັ່ງນັ້ນ, ພຣະບິດາເອີຍ, ຈົ່ງໂຜດພີ່
ນ້ອງເຫລົ່ານີ້ຂອງລູກທີ່ [ກ]ເຊື່ອໃນນາມຂອງ
ລູກ, ເພື່ອວ່າພວກເຂົາຈະມາຫາລູກ ແລະ
ມີ [ຂ]ຊີວິດອັນເປັນນິດ.
6 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າຜູ້ຄົນແຫ່ງ
ສາດສະໜາຈັກຂອງເຮົາ, ແລະ ພວກເຈົ້າ
ແອວເດີຈົ່ງຟັງນຳກັນ, ແລະ ໄດ້ຍິນສຽງ
ຂອງເຮົາໃນເວລາທີ່ເອີ້ນວ່າ [ກ]ມື້ນີ້, ແລະ
ຢ່າເຮັດໃຈແຂງກະດ້າງ;
7 ເພາະຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ເຮົາຄື [ກ]ອາລະຟາ ແລະ
ໂອເມຄາ, ເປັນຕົ້ນ ແລະ ທີ່ສຸດ, ເປັນ
ຄວາມສະຫວ່າງ ແລະ ຊີວິດຂອງໂລກ—
[ຂ]ຄວາມສະຫວ່າງຊຶ່ງສ່ອງແສງຢູ່ໃນຄວາມ
ມືດ ແລະ ຄວາມມືດບໍ່ເຂົ້າໃຈມັນເລີຍ;
8 ເຮົາໄດ້ມາຫາຜູ້ຄົນຂອງເຮົາ, ແລະ ຜູ້
ຄົນຂອງເຮົາບໍ່ໄດ້ຮັບເອົາເຮົາ; ແຕ່ຫລາຍ
ຕໍ່ຫລາຍຄົນທີ່ຮັບເຮົາ, ເຮົາຈະມອບ
[ກ]ອຳນາດໃຫ້ເຮັດ [ຂ]ສິ່ງມະຫັດສະຈັນຫລາຍ
ຢ່າງ, ແລະ ເພື່ອກາຍເປັນ [ຄ]ບຸດຂອງພຣະ
ເຈົ້າ; ແລະ ແມ່ນແຕ່ຕໍ່ຄົນທີ່ [ງ]ເຊື່ອໃນນາມ
ຂອງເຮົາ, ເຮົາກໍຈະມອບອຳນາດໃຫ້ເພື່ອ
ຈະໄດ້ມີ [ຈ]ຊີວິດນິລັນດອນ.
9 ແລະ ແມ່ນແຕ່ດັ່ງນັ້ນ ເຮົາໄດ້ສົ່ງ

**45** 1 *ກ* ຄມພ ສາດສະໜາຈັກ ຂອງພຣະເຢຊູຄຣິດ.
*ຂ* ຄພ 50:35.
*ຄ* ຢມຢ 14:22; 3 ນຟ 9:15; ຄພ 14:9. ຄມພ ສ້າງ, ການສ້າງ.
2 *ກ* ແອວ 34:33–35.
*ຂ* ມທ 24:44.
*ຄ* ຢມຢ 8:20; ຄພ 56:16. ຄມພ ເກັບກ່ຽວ.
3 *ກ* ຄພ 62:1. ຄມພ ວິງວອນແທນ, ຜູ້ວິງວອນແທນ.
4 *ກ* ຄພ 19:18–19. ຄມພ ຊົດໃຊ້, ການຊົດໃຊ້.
*ຂ* ຮຣ 4:15.
*ຄ* ຢຮ 12:28.
5 *ກ* ຄພ 20:25; 35:2; 38:4.
*ຂ* ຢຮ 3:16.
6 *ກ* ຮຣ 3:13; ຄພ 64:23–25.
7 *ກ* ພນມ 1:8; 21:6; ຄພ 19:1.
*ຂ* ຢຮ 1:5.
8 *ກ* ມທ 10:1. ຄມພ ອຳນາດ.
*ຂ* ຄມພ ມະຫັດສະຈັນ, ການມະຫັດສະຈັນ.
*ຄ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
*ງ* ຄມພ ສັດທາ; ເຊື່ອ, ຄວາມເຊື່ອ.
*ຈ* ຄພ 14:7.

[ກ]ພັນທະ ສັນ ຍາ [ຂ]ອັນ ເປັນ ນິດ ຂອງ ເຮົາ
ມາ ໃນ ໂລກ, ເພື່ອ ເປັນ ຄວາມ ສະ ຫວ່າງ
ແກ່ ໂລກ, ແລະ ເປັນ [ຄ]ທຸງ ສັນ ຍານ ໃຫ້ ຜູ້
ຄົນ ຂອງ ເຮົາ, ແລະ ໃຫ້ [ງ]ຄົນ ຕ່າງ ຊາດ
ສະ ແຫວງ ຫາ ມັນ, ແລະ ໃຫ້ ເປັນ [ຈ]ຜູ້ ສົ່ງ
ຂ່າວກ່ອນໜ້າເຮົາ ເພື່ອຕຽມທາງໄວ້ກ່ອນ
ເຮົາ.
10 ດັ່ງນັ້ນ, ຈົ່ງມາຫາມັນ, ແລະ ກັບຜູ້ທີ່
ມາ ເຮົາຈະໃຫ້ເຫດຜົນດັ່ງທີ່ໃຫ້ກັບຄົນໃນ
ສະໄໝບູຮານ, ແລະ ເຮົາ ຈະສະແດງເຫດ
ຜົນອັນມີ [ກ]ພະລັງແກ່ພວກເຈົ້າ.
11 ດັ່ງນັ້ນ, ຈົ່ງເຊື່ອຟັງນຳກັນ ແລະ ໃຫ້
ເຮົາ ສະແດງ ແມ່ນ ແຕ່ ຄວາມ ສະຫລຽວ
ສະຫລາດຂອງເຮົາແກ່ພວກເຈົ້າ—ຄວາມ
ສະຫລຽວ ສະຫລາດ ຂອງ ພຣະ ອົງ ຜູ້ ຊຶ່ງ
ພວກ ເຈົ້າ ກ່າວ ວ່າ ເປັນ ພຣະ ເຈົ້າ ຂອງ
[ກ]ເອນົກ, ແລະ ພີ່ນ້ອງຂອງລາວ,
12 ຜູ້ທີ່ຖືກ [ກ]ແຍກໄປຈາກແຜ່ນດິນໂລກ,
ແລະ ຖືກຮັບໄວ້ກັບຕົວເຮົາເອງ—[ຂ]ເມືອງ
ທີ່ຖືກຮັກສາໄວ້ຈົນກວ່າ ວັນແຫ່ງຄວາມ
ຊອບທຳຈະມາເຖິງ—ວັນຊຶ່ງຄົນບໍລິສຸດ
ທັງປວງສະແຫວງຫາ, ແລະ ເຂົາບໍ່ພົບມັນ
ເລີຍ ເພາະຄວາມຊົ່ວຮ້າຍ ແລະ ຄວາມ
ໜ້າກຽດຊັງ;
13 ແລະ ເຂົາ ຍອມ ຮັບ ວ່າ ເປັນ ພຽງ ແຕ່
[ກ]ຄົນຕ່າງດ້າວ ແລະ ຊາວອົບພະຍົບເທິງ
ແຜ່ນດິນໂລກ;
14 ແຕ່ໄດ້ຮັບ [ກ]ຄຳສັນຍາວ່າ ເຂົາຈະພົບ
ມັນ ແລະ ເຫັນມັນໃນເນື້ອໜັງຂອງເຂົາ.
15 ດັ່ງນັ້ນ, ຈົ່ງເຊື່ອຟັງ ແລະ ເຮົາຈະໃຫ້
ເຫດຜົນກັບພວກເຈົ້າ, ແລະ ເຮົາຈະກ່າວ
ກັບພວກເຈົ້າ ແລະ ທຳນາຍ, ດັ່ງທີ່ເຮັດກັບ
ຄົນໃນສະໄໝບູຮານ.
16 ແລະ ເຮົາ ຈະ ສະແດງ ມັນ ໃຫ້ ເຫັນ
ຢ່າງແຈ່ມແຈ້ງດັ່ງທີ່ເຮົາໄດ້ [ກ]ສະແດງມັນ
ແກ່ສານຸສິດຂອງເຮົາຂະນະທີ່ເຮົາໄດ້ຢືນຢູ່
ຕໍ່ໜ້າພວກເຂົາໃນເນື້ອໜັງ, ແລະ ໄດ້ກ່າວ
ກັບພວກເຂົາ, ມີຄວາມວ່າ: ດັ່ງທີ່ພວກເຈົ້າ
ໄດ້ຖາມເຮົາກ່ຽວກັບ [ຂ]ເຄື່ອງໝາຍຂອງ
ການມາຂອງເຮົາ, ໃນວັນທີ່ເຮົາຈະມາໃນ
ລັດສະໝີພາບຂອງເຮົາໃນໝູ່ເມກແຫ່ງຟ້າ
ສະຫວັນ, ເພື່ອເຮັດໃຫ້ຄຳສັນຍາທີ່ເຮົາໄດ້
ເຮັດໄວ້ກັບບັນພະບຸລຸດຂອງພວກເຈົ້າສຳ
ເລັດຄົບຖ້ວນ,
17 ເພາະເນື່ອງດ້ວຍພວກເຈົ້າໄດ້ຄິດວ່າ
[ກ]ການແຍກຂອງ [ຂ]ວິນຍານ ແລະ ຮ່າງກາຍ
ຂອງ ພວກ ເຈົ້າ ເປັນ ເວລາ ດົນ ນານ ເປັນ
ການຈ່ອງຈຳ, ເຮົາຈຶ່ງຈະສະແດງໃຫ້ພວກ
ເຈົ້າເຫັນວ່າ ວັນແຫ່ງການໄຖ່ຈະມາຢ່າງ
ໃດ, ແລະ [ຄ]ການຟື້ນຟູຊາວອິດສະຣາເອນ
ທີ່ [ງ]ກະຈັດກະຈາຍໄປນຳອີກ.
18 ແລະ ບັດນີ້ ພວກເຈົ້າຫລຽວເບິ່ງພຣະ
ວິຫານນີ້ ຊຶ່ງຢູ່ໃນເຢຣູຊາເລັມ, ຊຶ່ງພວກ
ເຈົ້າເອີ້ນວ່າບ້ານຂອງພຣະເຈົ້າ, ແລະ ສັດ

---

9 *ກ* ຢມຢ 31:31–34; ມມ 5:20.
*ຂ* ຄມພ ພັນທະສັນຍາ ໃໝ່ ແລະ ເປັນນິດ.
*ຄ* 2 ນຟ 29:2.
*ງ* ອຊຢ 42:6; 2 ນຟ 10:9–18.
*ຈ* ມລກ 3:1.
10 *ກ* ອຊຢ 41:21; ຄພ 50:10–12.
11 *ກ* ມຊ 7:69.
12 *ກ* ປຈສ ປຖກ 14:30–34 (ພາກຫ້ອຍທ້າຍ); ຄພ 38:4; ມຊ 7:21.
*ຂ* ມຊ 7:62–64. ຄມພ ຊີໂອນ.
13 *ກ* ຮຣ 11:13; 1 ປຕ 2:11.
14 *ກ* ຮຣ 11:8–13; ມຊ 7:63.
16 *ກ* ມທ 24; ລກ 21:7–36; ຈສ—ມ 1.
*ຂ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
17 *ກ* ຄພ 138:50.
*ຂ* ຄມພ ວິນຍານ.
*ຄ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ງ* 1 ນຟ 10:12–14. ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ.

ຕູຂອງພວກເຈົ້າກ່າວວ່າບ້ານຫລັງນີ້ຈະບໍ່
ພິນາດເລີຍ.
19 ແຕ່, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ຄວາມພິນາດຈະມາສູ່ຄົນ
ລຸ້ນນີ້ເໝືອນດັ່ງຂະໂມຍໃນຍາມກາງຄືນ,
ແລະ ຜູ້ຄົນເຫລົ່ານີ້ຈະຖືກທຳລາຍ ແລະ
ກະຈັດກະຈາຍໄປໃນບັນດາປະຊາຊາດ
ທັງປວງ.
20 ແລະ ພຣະວິຫານແຫ່ງນີ້ ຊຶ່ງພວກ
ເຈົ້າເຫັນຢູ່ຕອນນີ້ຈະຖືກພັງລົງຈົນວ່າບໍ່
ເຫລືອແມ່ນແຕ່ຫີນກ້ອນໜຶ່ງ.
21 ແລະ ເຫດການ ຈະບັງເກີດຂຶ້ນຄື
ຊາວຢິວລຸ້ນນີ້ຈະບໍ່ລ່ວງລັບໄປຈົນກວ່າ
ຄວາມພິນາດຊຶ່ງເຮົາໄດ້ບອກພວກເຈົ້າ
ກ່ຽວກັບເຂົາຈະບັງເກີດຂຶ້ນ.
22 ພວກເຈົ້າກ່າວວ່າ ພວກເຈົ້າຮູ້ວ່າ
ຄາວ *ກ*ສິ້ນສຸດໂລກມາເຖິງແລ້ວ; ພວກເຈົ້າ
ຍັງໄດ້ກ່າວຕື່ມອີກວ່າ ພວກເຈົ້າຮູ້ວ່າຟ້າ
ສະຫວັນ ແລະ ແຜ່ນດິນໂລກຈະສູນສິ້ນ
ໄປ;
23 ແລະ ໃນນີ້ພວກເຈົ້າກ່າວຖືກແລ້ວ,
ເພາະມັນເປັນແນວນັ້ນແທ້; ແຕ່ສິ່ງເຫລົ່ານີ້
ຊຶ່ງເຮົາໄດ້ບອກພວກເຈົ້າ ຈະບໍ່ສູນສິ້ນໄປ
ຈົນກວ່າທຸກສິ່ງຈະສຳເລັດຄົບຖ້ວນ.
24 ແລະ ສິ່ງນີ້ເຮົາໄດ້ບອກພວກເຈົ້າ
ກ່ຽວກັບເຢຣູຊາເລັມ; ແລະ ເມື່ອວັນນັ້ນຈະ
ມາເຖິງ, ສ່ວນໜຶ່ງທີ່ເຫລືອຢູ່ຈະ *ກ*ກະຈັດ
ກະຈາຍກັນໄປໃນບັນດາປະຊາຊາດທັງ
ປວງ;
25 ແຕ່ເຂົາຈະຖືກ *ກ*ເຕົ້າໂຮມເຂົ້າກັນ
ອີກ; ແຕ່ເຂົາຈະດຳລົງຢູ່ຈົນກວ່າເວລາ
ຂອງ *ຂ*ຄົນຕ່າງຊາດຈະສິ້ນສຸດລົງ.
26 ແລະ ໃນ *ກ*ວັນນັ້ນຈະໄດ້ຍິນເລື່ອງ
*ຂ*ສົງຄາມ ແລະ ຂ່າວລືເລື່ອງສົງຄາມ, ແລະ
ທັງແຜ່ນດິນໂລກ ຈະສັບສົນວຸ້ນວາຍ,
ແລະ ໃຈຂອງມະນຸດຈະ *ຄ*ທໍ້ແທ້, ແລະ ເຂົາ
ຈະກ່າວວ່າພຣະຄຣິດ *ງ*ຊັກຊ້າໃນການສະ
ເດັດມາຂອງພຣະອົງຈົນກວ່າທີ່ສຸດຂອງ
ແຜ່ນດິນໂລກ.
27 ແລະ ຄວາມຮັກຂອງມະນຸດຈະເຢັນ
ຊາ, ແລະ ຄວາມຊົ່ວຮ້າຍຈະມີຢ່າງຫລວງ
ຫລາຍ.
28 ແລະ ເມື່ອເວລາຂອງ *ກ*ຄົນຕ່າງຊາດ
ໄດ້ມາເຖິງ, *ຂ*ຄວາມສະຫວ່າງຈະສ່ອງແສງ
ເຂົ້າໄປໃນບັນດາຄົນທີ່ນັ່ງຢູ່ໃນຄວາມມືດ,
ແລະ ມັນຈະເປັນຄວາມສົມບູນແຫ່ງພຣະ
ກິດຕິຄຸນຂອງເຮົາ;
29 ແຕ່ເຂົາບໍ່ *ກ*ຮັບມັນເລີຍ; ເພາະເຂົາ
ບໍ່ເຫັນຄວາມສະຫວ່າງນັ້ນ, ແລະ ເຂົາ
ຫັນ *ຂ*ໃຈໜີຈາກເຮົາ ເພາະ *ຄ*ກົດເກນຂອງ
ມະນຸດ.
30 ແລະ ໃນຄົນລຸ້ນນັ້ນ ເວລາຂອງຄົນ
ຕ່າງຊາດຈະສິ້ນສຸດລົງ.
31 ແລະ ຈະມີມະນຸດຢືນຢູ່ໃນຄົນລຸ້ນ
ນັ້ນ, ຊຶ່ງຈະບໍ່ລ່ວງລັບໄປຈົນກວ່າເຂົາຈະ
ເຫັນ *ກ*ໄພພິບັດຫລວງຫລາຍ; ເພາະໂຣກ
ພະຍາດແຫ່ງຄວາມພິນາດ ຈະປົກຄຸມ
ແຜ່ນດິນ.

---

22 *ກ* ຄມພ ໂລກ—ທີ່ສຸດຂອງໂລກ.
24 *ກ* 2 ນຟ 25:15.
25 *ກ* ນມຢ 1:9; ອຊຢ 11:12–14; 1 ນຟ 22:10–12; 2 ນຟ 21:12–14.
*ຂ* ລກ 21:24.
26 *ກ* ຄມພ ຍຸກສຸດທ້າຍ.
*ຂ* ຄພ 87; ຈສ—ມ 1:23.
*ຄ* ລກ 21:26.
*ງ* 2 ປຕ 3:3–10.
28 *ກ* 1 ນຟ 15:13.
*ຂ* ຄມພ ການຟື້ນຟູພຣະກິດຕິຄຸນ; ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
29 *ກ* ຢຮ 1:5.
*ຂ* ມທ 15:8–9.
*ຄ* ຄພ 3:6–8; 46:7; ຈສ—ປ 1:19.
31 *ກ* ຄພ 5:19–20; 97:22–25.

32 ແຕ່ສານຸສິດຂອງເຮົາຈະ [ກ]ຢືນຢູ່ໃນ
ສະຖານທີ່ສັກສິດ, ແລະ ຈະບໍ່ຫວັ່ນໄຫວ;
ແຕ່ໃນບັນດາຄົນຊົ່ວ, ມະນຸດຈະເປັ່ງສຽງ
ຂອງຕົນ ແລະ [ຂ]ສາບແຊ່ງພຣະເຈົ້າ ແລະ
ຕາຍ.
33 ແລະ ຈະມີ [ກ]ແຜ່ນດິນໄຫວໃນບ່ອນ
ຕ່າງໆນຳອີກ, ແລະ ຄວາມເປົ່າປ່ຽວຢ່າງ
ຫລວງຫລາຍ; ແຕ່ມະນຸດຍັງຈະເຮັດໃຈ
ແຂງກະດ້າງຕໍ່ຕ້ານເຮົາຢູ່, ແລະ ເຂົາຈະ
ຍົກ [ຂ]ດາບຂຶ້ນ, ຕໍ່ຕ້ານກັນ, ແລະ ເຂົາ
ຈະຂ້າຟັນກັນ.
34 ແລະ ບັດນີ້, ເມື່ອເຮົາພຣະຜູ້ເປັນເຈົ້າ
ໄດ້ກ່າວຖ້ອຍຄຳເຫລົ່ານີ້ແກ່ສານຸສິດຂອງ
ເຮົາແລ້ວ, ພວກເຂົາກໍມີຄວາມຢ້ານກົວ.
35 ແລະ ເຮົາໄດ້ກ່າວກັບພວກເຂົາວ່າ:
ຢ່າສູ່ [ກ]ຢ້ານ, ເພາະ, ເມື່ອສິ່ງເຫລົ່ານີ້ທັງ
ໝົດຈະເກີດຂຶ້ນ, ພວກເຈົ້າຈະຮູ້ວ່າ ຄຳສັນ
ຍາທີ່ໄດ້ເຮັດໄວ້ກັບພວກເຈົ້າຈະສຳເລັດ
ຄົບຖ້ວນ.
36 ແລະ ເມື່ອຄວາມສະຫວ່າງເລີ່ມສ່ອງ
ແສງອອກມາ, ມັນຈະເປັນກັບພວກເຂົາ
ເໝືອນດັ່ງຄຳອຸປະມາທີ່ເຮົາຈະສະແດງແກ່
ພວກເຈົ້າ—
37 ພວກເຈົ້າຫລຽວເບິ່ງ ແລະ ເຫັນ [ກ]ຕົ້ນ
ໝາກເດື່ອ, ແລະ ພວກເຈົ້າເຫັນມັນດ້ວຍ
ຕາຂອງພວກເຈົ້າ, ແລະ ພວກເຈົ້າກ່າວ
ເມື່ອມັນເລີ່ມປົ່ງໃບ, ແລະ ໃບຂອງມັນຍັງ
ອ່ອນ, ວ່າລະດູຮ້ອນໃກ້ຈະມາເຖິງແລ້ວ;
38 ແມ່ນແຕ່ເປັນເຊັ່ນນັ້ນ ໃນວັນນັ້ນເມື່ອ
ພວກເຂົາຈະເຫັນສິ່ງທັງຫລາຍເຫລົ່ານີ້,
ແລ້ວ ພວກເຂົາຈະຮູ້ວ່າ ຊົ່ວໂມງໃກ້ຈະມາ
ເຖິງແລ້ວ.
39 ແລະ ເຫດການຈະບັງເກີດຂຶ້ນຄື ຄົນ
ທີ່ [ກ]ຢ້ານກົວເຮົາຈະ [ຂ]ເຝົ້າຄອຍຖ້າໃຫ້ [ຄ]ວັນ
ອັນຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າມາເຖິງ,
ແມ່ນແຕ່ເຝົ້າຄອຍ [ງ]ເຄື່ອງໝາຍແຫ່ງການ
ມາຂອງ [ຈ]ບຸດມະນຸດ.
40 ແລະ ພວກເຂົາຈະເຫັນເຄື່ອງໝາຍ
ແລະ ການມະຫັດສະຈັນ, ເພາະສິ່ງເຫລົ່າ
ນັ້ນຈະຖືກສະແດງອອກມາໃນຟ້າສະຫວັນ
ເບື້ອງເທິງ, ແລະ ໃນແຜ່ນດິນໂລກເບື້ອງ
ລຸ່ມ.
41 ແລະ ພວກເຂົາຈະເຫັນເລືອດ, ແລະ
[ກ]ໄຟ, ແລະ ໝອກຄວັນ.
42 ແລະ ກ່ອນວັນຂອງພຣະຜູ້ເປັນເຈົ້າ
ຈະມາເຖິງ, [ກ]ດວງຕາເວັນຈະມືດດັບ, ແລະ
ດວງເດືອນຈະກັບເປັນເລືອດ, ແລະ ດວງ
ດາວຈະຕົກລົງມາຈາກຟ້າສະຫວັນ.
43 ແລະ ຜູ້ທີ່ເຫລືອຢູ່ຈະມາເຕົ້າໂຮມກັນ
ຢູ່ບ່ອນນີ້;
44 ແລະ ຈາກນັ້ນ ພວກເຂົາຈະຫລຽວ
ຫາເຮົາ, ແລະ, ຈົ່ງເບິ່ງ, ເຮົາຈະມາ; ແລະ
ພວກເຂົາຈະເຫັນເຮົາຢູ່ໃນໝູ່ເມກແຫ່ງຟ້າ
ສະຫວັນ, ຫຸ້ມຫໍ່ດ້ວຍອຳນາດ ແລະ [ກ]ລັດ
ສະໝີພາບອັນຍິ່ງໃຫຍ່; ພ້ອມດ້ວຍເຫລົ່າ
ທູດທັງໝົດ; ແລະ ຄົນທີ່ບໍ່ [ຂ]ຫລຽວຫາເຮົາ
ຈະຖືກຕັດອອກ.
45 ແຕ່ກ່ອນແຂນຂອງພຣະຜູ້ເປັນເຈົ້າ

32 *ກ* ຄພ 101:21–22, 64.
*ຂ* ພນມ 16:11, 21.
33 *ກ* ຄພ 43:18; 88:87–90.
*ຂ* ຄພ 63:33.
35 *ກ* ມທ 24:6.
37 *ກ* ມຣກ 13:28;
ລກ 21:29–31.
39 *ກ* ຄພ 10:55–56.
ຄມພ ເຊື່ອຟັງ, ການເຊື່ອ
ຟັງ, ຟັງຄວາມ;
ຢ້ານກົວ, ຄວາມຢ້ານກົວ—
ຄວາມຢ້ານກົວພຣະເຈົ້າ.
*ຂ* 2 ປຕ 3:10–13;
ຄພ 35:15–16; ມຊ 7:62.
*ຄ* ຄມພ ການສະເດັດມາຄັ້ງທີ
ສອງຂອງພຣະເຢຊູຄຣິດ.
*ງ* ຄມພ ເຄື່ອງໝາຍ
ແຫ່ງການເວລາ.
*ຈ* ຄມພ ບຸດມະນຸດ.
41 *ກ* ຄພ 29:21; 97:25–26.
42 *ກ* ຢອ 2:10; ພນມ 6:12;
ຄພ 88:87; 133:49.
44 *ກ* ຄມພ ພຣະເຢຊູຄຣິດ—
ລັດສະໝີພາບຂອງ
ພຣະເຢຊູຄຣິດ.
*ຂ* ມທ 24:43–51;
ມຣກ 13:32–37.

ຈະ ຕົກ ໃສ່, ທູດ ຈະ ເປົ່າ [ກ]ແກ ຂອງ ເຂົາ,
ແລະ ໄພ່ພົນຂອງພຣະ ເຈົ້າທີ່ນອນ ຢູ່ ຈະ
ອອກ [ຂ]ມາພົບເຮົາຢູ່ໃນ [ຄ]ເມກ.
46 ດັ່ງນັ້ນ, ຖ້າພວກເຈົ້າໄດ້ນອນຢູ່ໃນ
[ກ]ສັນຕິສຸກ ພວກເຈົ້າກໍເປັນສຸກແລ້ວ; ເພາະ
ດັ່ງທີ່ພວກ ເຈົ້າ ຮູ້ໄດ້ ເຫັນເຮົາໃນຕອນນີ້
ແລະ ຮູ້ວ່າເຮົາດຳລົງຢູ່ສັນໃດ, ແມ່ນແຕ່
ສັນນັ້ນ ພວກເຈົ້າຈະ [ຂ]ມາຫາເຮົາ ແລະ ຈິດ
ວິນຍານຂອງພວກເຈົ້າຈະມີ [ຄ]ຊີວິດ, ແລະ
ການໄຖ່ຂອງພວກເຈົ້າຈະສົມບູນ; ແລະ
ໄພ່ພົນຂອງພຣະເຈົ້າຈະອອກມາຈາກສີ່
ສ່ວນຂອງແຜ່ນດິນໂລກ.
47 ຈາກນັ້ນ [ກ]ແຂນຂອງພຣະຜູ້ເປັນເຈົ້າ
ຈະຕົກໃສ່ເທິງປະຊາຊາດ.
48 ແລະ ເມື່ອນັ້ນ ພຣະຜູ້ເປັນເຈົ້າຈະ
ວາງພຣະບາດຂອງພຣະອົງໄວ້ເທິງ [ກ]ພູ
ໜ່ວຍນີ້, ແລະ ມັນຈະແຍກເປັນສອງ, ແລະ
ແຜ່ນດິນໂລກ [ຂ]ສັ່ນ, ແລະ ເນີ້ງໄປເບື້ອງ
ນັ້ນເບື້ອງນີ້, ແລະ ຟ້າສະຫວັນຈະ [ຄ]ສັ່ນສະ
ເທືອນນຳອີກ.
49 ແລະ ພຣະຜູ້ເປັນເຈົ້າຈະເປັ່ງສຽງ,
ແລະ ທີ່ສຸດຂອງແຜ່ນດິນໂລກຈະໄດ້ຍິນ
ສຸລະສຽງຂອງພຣະອົງ; ແລະ ປະຊາຊາດ
ຂອງແຜ່ນດິນໂລກຈະ [ກ]ເປັນທຸກ, ແລະ ຄົນ
ທີ່ໄດ້ຫົວຈະເຫັນຄວາມໂງ່ຈ້າຂອງເຂົາ.
50 ແລະ ໄພອັນໃຫຍ່ຫລວງຈະຖ້ວມຄົນ
ທີ່ຫົວຂວັນ, ແລະ ຄົນມັກເຍາະເຍີ້ຍຈະ
ໝົດໄປ; ແລະ ຄົນທີ່ໄດ້ຫາໂອກາດກະທຳ
ຄວາມຊົ່ວຮ້າຍຈະຖືກໂຄ່ນລົງ ແລະ ໂຍນ
ເຂົ້າກອງໄຟ.
51 ແລະ ຈາກນັ້ນ [ກ]ຊາວຢິວຈະ [ຂ]ຫລຽວ
ເບິ່ງເຮົາ ແລະ ກ່າວວ່າ: ນີ້ແມ່ນຮອຍແຜ
ຫຍັງຢູ່ໃນພຣະຫັດ ແລະ ໃນພຣະບາດ
ຂອງພຣະອົງ?
52 ເມື່ອນັ້ນ ພວກເຂົາຈະຮູ້ວ່າ ເຮົາຄື
ພຣະຜູ້ເປັນເຈົ້າ; ເພາະເຮົາຈະກ່າວກັບ
ພວກເຂົາວ່າ: ຮອຍແຜເຫລົ່ານີ້ເປັນແຜ
ທີ່ເຮົາໄດ້ຮັບ [ກ]ບາດເຈັບຢູ່ໃນບ້ານຂອງ
ເພື່ອນເຮົາ. ເຮົາຄືຜູ້ທີ່ຖືກຍົກຂຶ້ນ. ເຮົາຄື
ພຣະເຢຊູຜູ້ຖືກ [ຂ]ຄຶງ. ເຮົາຄືພຣະບຸດຂອງ
ພຣະເຈົ້າ.
53 ແລະ ເມື່ອນັ້ນພວກເຂົາຈະ [ກ]ຮ້ອງໄຫ້
ເພາະຄວາມຊົ່ວຮ້າຍຂອງພວກເຂົາ; ຈາກ
ນັ້ນພວກເຂົາຈະຄວນຄາງເພາະພວກເຂົາ
ໄດ້ຂົ່ມເຫັງ [ຂ]ກະສັດຂອງພວກເຂົາ.
54 ແລະ ຈາກນັ້ນປະຊາຊາດ [ກ]ນອກ
ສາດສະໜາຈະໄດ້ຮັບການໄຖ່, ແລະ ຄົນ
ທີ່ບໍ່ຮູ້ກົດຈະມີສ່ວນໃນ [ຂ]ການຟື້ນຄືນຊີວິດ
ຄັ້ງທຳອິດ; ແລະ ມັນຈະພໍ [ຄ]ທົນໄດ້ສຳລັບ
ພວກເຂົາ.
55 ແລະ [ກ]ຊາຕານຈະຖືກ [ຂ]ມັດໄວ້, ເພື່ອ
ມັນຈະບໍ່ມີບ່ອນຢູ່ໃນໃຈຂອງລູກຫລານ
ມະນຸດ.
56 ແລະ ໃນ [ກ]ວັນນັ້ນ, ເມື່ອເຮົາຈະມາ

45 ກ ຄພ 29:13; 43:18.
ຂ ຄພ 88:96–97.
ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຄ 1 ທສນ 4:16–17.
46 ກ ແອວ 40:12.
ຂ ອຊຢ 55:3.
ຄ ຄມພ ຊີວິດນິລັນດອນ.
47 ກ ຄພ 1:12–16.
48 ກ ຊກຢ 14:4.
ຂ ຄພ 43:18; 88:87.
ຄ ຢອ 3:16;
ຄພ 49:23.
49 ກ ຄພ 87:6.
51 ກ ຄມພ ຊາວຢິວ.
ຂ ຊກຢ 12:10.
52 ກ ຊກຢ 13:6.
ຂ ຄມພ ຄຶງ, ການຄຶງ.
53 ກ ພນມ 1:7.
ຂ ລກ 23:38;
ຢຮ 19:3, 14–15.
54 ກ ອຊກ 36:23; 39:21.
ຂ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຄ ຄພ 75:22.
55 ກ ຄມພ ມານ.
ຂ ພນມ 20:2;
1 ນຟ 22:26;
ຄພ 43:31; 88:110.
56 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.

ໃນລັດສະໝີພາບຂອງເຮົາ, ຄຳອຸປະມາທີ່
ເຮົາໄດ້ກ່າວໄວ້ກ່ຽວກັບຍິງ [ຂ]ສາວບໍລິສຸດ
ສິບຄົນຈະສຳເລັດຄົບຖ້ວນ.
57 ເພາະພວກເຂົາເປັນຄົນສະຫລາດ
ແລະ ໄດ້ຮັບເອົາ [ກ]ຄວາມຈິງ, ແລະ ໄດ້ຮັບ
ເອົາພຣະວິນຍານສັກສິດເພື່ອ [ຂ]ການນຳ
ພາ, ແລະ ບໍ່ໄດ້ຖືກ [ຄ]ຫລອກລວງ—ຕາມ
ຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ
ພວກເຂົາຈະບໍ່ຖືກໂຄ່ນລົງ ແລະ ໂຍນເຂົ້າ
[ງ]ກອງໄຟ, ແຕ່ຈະດຳລົງຢູ່ໃນວັນນັ້ນ.
58 ແລະ [ກ]ແຜ່ນດິນໂລກຈະຖືກມອບ
ໃຫ້ແກ່ພວກເຂົາເພື່ອເປັນ [ຂ]ມູນມໍລະດົກ;
ແລະ ພວກເຂົາຈະເພີ່ມທະວີ ແລະ [ຄ]ເຂັ້ມ
ແຂງຂຶ້ນ, ແລະ ລູກຫລານຂອງພວກເຂົາ
ຈະເຕີບໂຕປາດສະຈາກບາບໄປສູ່ [ງ]ຄວາມ
ລອດ.
59 ເພາະພຣະຜູ້ເປັນເຈົ້າຈະສະຖິດຢູ່ໃນ
[ກ]ທ່າມກາງພວກເຂົາ, ແລະ ລັດສະໝີພາບ
ຂອງພຣະອົງຈະຢູ່ເທິງພວກເຂົາ, ແລະ
ພຣະອົງຈະເປັນກະສັດຂອງພວກເຂົາ
ແລະ ເປັນ [ຂ]ຜູ້ໃຫ້ກົດຂອງພວກເຂົາ.
60 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບ
ພວກເຈົ້າວ່າ ຈະບໍ່ມອບໃຫ້ແກ່ພວກເຈົ້າ
ເພື່ອຈະໄດ້ຮູ້ຕື່ມອີກກ່ຽວກັບບົດນີ້, ຈົນ
ກວ່າ [ກ]ພຣະຄຳພີໃໝ່ຖືກແປ, ແລະ ໃນນັ້ນ
ສິ່ງເຫລົ່ານີ້ທັງໝົດຈະຖືກເຮັດໃຫ້ເປັນທີ່ຮູ້
ຈັກ;
61 ດັ່ງນັ້ນ ເຮົາອະນຸຍາດພວກເຈົ້າ ວ່າ
ບັດນີ້ພວກເຈົ້າແປມັນໄດ້, ເພື່ອວ່າພວກ
ເຈົ້າຈະຕຽມພ້ອມສຳລັບສິ່ງທີ່ ຈະ ມາ
ເຖິງ.
62 ເພາະຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ສິ່ງທີ່ຍິ່ງໃຫຍ່ຄອຍຖ້າ
ພວກເຈົ້າຢູ່;
63 ພວກເຈົ້າໄດ້ຍິນເລື່ອງ [ກ]ສົງຄາມຢູ່ໃນ
ຕ່າງແດນ; ແຕ່, ຈົ່ງເບິ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ມັນເກືອບຈະມາຮອດແລ້ວ, ແມ່ນ
ແຕ່ຢູ່ໃກ້ໆປະຕູຂອງພວກເຈົ້າ, ແລະ ບໍ່
ຫລາຍປີຈາກນີ້ ພວກເຈົ້າຈະໄດ້ຍິນເລື່ອງ
ສົງຄາມຢູ່ໃນແຜ່ນດິນຂອງພວກເຈົ້າເອງ.
64 ດັ່ງນັ້ນ ເຮົາ, ພຣະຜູ້ເປັນເຈົ້າ, ໄດ້
ກ່າວໄວ້ວ່າ, ພວກເຈົ້າຈົ່ງມາເຕົ້າໂຮມກັນ
ຈາກແຜ່ນດິນທາງ [ກ]ທິດຕາເວັນອອກ, ມາ
ຊຸມນຸມກັນແອວເດີຂອງສາດສະໜາຈັກ
ຂອງເຮົາ; ຈົ່ງອອກໄປຫາປະເທດທາງທິດ
ຕາເວັນຕົກ, ເອີ້ນໃຫ້ຜູ້ອາໄສກັບໃຈ, ແລະ
ຕາບໃດທີ່ເຂົາກັບໃຈ, ໃຫ້ສ້າງໜ່ວຍຂອງ
ສາດສະໜາຈັກຂຶ້ນໃຫ້ແກ່ເຮົາ.
65 ແລະ ດ້ວຍໃຈດຽວ ແລະ ຈິດໃຈດຽວ,
ຈົ່ງຮວບຮວມຊັບສິນຂອງພວກເຈົ້າເພື່ອ
ຈະໄດ້ [ກ]ຊື້ມູນມໍລະດົກ ຊຶ່ງ ຈະກຳນົດໃຫ້
ແກ່ພວກເຈົ້າຫລັງຈາກນີ້.
66 ແລະ ມັນ ຈະຖືກເອີ້ນວ່າ [ກ]ເຢຣູ
ຊາເລັມໃໝ່, [ຂ]ແຜ່ນດິນແຫ່ງ [ຄ]ສັນຕິສຸກ,

56 *ຂ* ມທ 25:1–13;
ຄພ 63:54.
57 *ກ* ຄມພ ຈິງ, ຄວາມຈິງ.
*ຂ* ຄມພ ພຣະວິນຍານບໍລິສຸດ.
*ຄ* ຈສ—ມ 1:37.
*ງ* ຄພ 29:7–9; 63:34;
64:23–24; 101:22–25.
58 *ກ* ຄມພ ພັນປີ.
*ຂ* ມທ 5:5.
*ຄ* ຄພ 63:51; 101:29–31.
*ງ* ຄມພ ລອດ, ຄວາມລອດ.
59 *ກ* ຄພ 29:11; 104:59.
*ຂ* ປຖກ 49:10;
ຊກຢ 14:9;
ຄພ 38:21–22.
60 *ກ* ຄມພ ການແປຂອງໂຈເຊັບ
ສະມິດ (ປຈສ). ເບິ່ງ
ການຄັດເລືອກຈາກ
ການແປພຣະຄຣິສຕະ
ທຳຄຳພີຂອງໂຈເຊັບ
ສະມິດ ນຳອີກ.
63 *ກ* ຄພ 38:29; 87:1–5;
130:12.
64 *ກ* ຄພ 42:64.
65 *ກ* ຄພ 63:27.
66 *ກ* ອທ 13:5–6;
ມຊ 7:62;
ຫຼຊ 1:10.
ຄມພ ຊີໂອນ;
ເຢຣູຊາເລັມໃໝ່.
*ຂ* ຄພ 57:1–3.
*ຄ* ຄມພ ສະຫງົບ,
ຄວາມສະຫງົບ.

ເມືອງ ᵓພັກພາ, ບ່ອນປອດໄພສຳລັບໄພ່
ພົນຂອງພຣະເຈົ້າສູງສຸດ;
67 ແລະ ᵑລັດສະໝີພາບຂອງພຣະຜູ້
ເປັນເຈົ້າຈະຢູ່ທີ່ນັ້ນ, ແລະ ຄວາມຢຳເກງ
ຂອງພຣະຜູ້ເປັນເຈົ້າກໍຈະຢູ່ທີ່ນັ້ນຄືກັນ,
ເຖິງຂະໜາດທີ່ຄົນຊົ່ວຈະບໍ່ມາຫາມັນ,
ແລະ ມັນຈະຖືກເອີ້ນວ່າຊີໂອນ.
68 ແລະ ເຫດການຈະບັງເກີດຂຶ້ນໃນບັນ
ດາຄົນຊົ່ວຄື ມະນຸດທຸກຄົນທີ່ຈະບໍ່ຍົກດາບ
ຂອງຕົນຂຶ້ນຕໍ່ຕ້ານເພື່ອນບ້ານຂອງຕົນ ຈະ
ຕ້ອງຫລົບໄປຫາຊີໂອນເພື່ອຄວາມປອດ
ໄພ.
69 ແລະ ຜູ້ຄົນຈາກປະຊາຊາດຕ່າງໆ
ພາຍໃຕ້ສະຫວັນຈະມາ ᵑເຕົ້າໂຮມກັນຢູ່ທີ່
ນັ້ນ; ແລະ ຈະເປັນຜູ້ຄົນກຸ່ມດຽວເທົ່ານັ້ນທີ່
ບໍ່ເຮັດສົງຄາມນຳກັນ.
70 ແລະ ຈະມີການກ່າວໃນບັນດາຄົນ
ຊົ່ວວ່າ: ຂໍໃຫ້ເຮົາຢ່າຂຶ້ນໄປຕໍ່ສູ້ກັບຊີໂອນ
ເລີຍ, ເພາະຜູ້ອາໄສຂອງຊີໂອນເປັນຕາ
ຢ້ານກົວ; ດັ່ງນັ້ນ ພວກເຮົາຈະຕ້ານບໍ່ໄຫວ.
71 ແລະ ເຫດການຈະບັງເກີດຂຶ້ນຄື ຄົນ
ຊອບທຳຈະຖືກເຕົ້າໂຮມເຂົ້າກັນຈາກບັນ
ດາປະຊາຊາດທັງປວງ, ແລະ ຈະມາສູ່
ຊີໂອນ, ຮ້ອງເພງແຫ່ງຄວາມສຸກອັນເປັນ
ນິດ.
72 ແລະ ບັດນີ້ ເຮົາກ່າວກັບພວກເຈົ້າວ່າ
ຈົ່ງເກັບເລື່ອງເຫລົ່ານີ້ໄວ້ບໍ່ໃຫ້ແຜ່ອອກໄປ
ສູ່ໂລກ ຈົນກວ່າເຮົາເຫັນສົມຄວນ, ເພື່ອວ່າ
ພວກເຈົ້າຈະເຮັດວຽກງານນີ້ໃຫ້ສຳເລັດໃນ
ຕາຂອງຜູ້ຄົນ, ແລະ ໃນຕາຂອງສັດຕູຂອງ
ພວກເຈົ້າ, ເພື່ອວ່າເຂົາຈະບໍ່ຮູ້ຈັກວຽກງານ
ຂອງພວກເຈົ້າ ຈົນກວ່າພວກເຈົ້າໄດ້ເຮັດ
ສຳເລັດສິ່ງຊຶ່ງເຮົາໄດ້ບັນຊາພວກເຈົ້າ;
73 ເພື່ອວ່າເມື່ອເຂົາຮູ້ມັນ, ເຂົາຈະພິຈາ
ລະນາເລື່ອງເຫລົ່ານີ້.
74 ເພາະ ເມື່ອພຣະຜູ້ເປັນເຈົ້າຈະມາ
ປະກົດ ພຣະອົງຈະເປັນ ᵑໜ້າຢ້ານກົວຕໍ່
ເຂົາ, ຄວາມຢ້ານກົວນັ້ນຈະຄອບງຳເຂົາ,
ແລະ ເຂົາຈະຢືນຢູ່ໄກໆ ແລະ ຕົວສັ່ນ.
75 ແລະ ປະຊາຊາດທັງປວງຈະຢ້ານກົວ
ເພາະຄວາມຢຳເກງຂອງພຣະຜູ້ເປັນເຈົ້າ,
ແລະ ອຳນາດແຫ່ງຄວາມຍິ່ງໃຫຍ່ຂອງ
ພຣະອົງ. ແມ່ນເປັນດັ່ງນັ້ນ. ອາແມນ.

---

# ພາກທີ 46

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ສາດສະໜາຈັກ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 8 ເດືອນມີນາ, 1831. ໃນຊ່ວງໄລຍະທຳອິດນີ້ຂອງສາດສະໜາຈັກ, ຍັງບໍ່ໄດ້ພັດທະນາແບບແຜນສຳລັບການດຳເນີນການຂອງສາດສະໜາຈັກເທື່ອ. ເຖິງຢ່າງໃດກໍຕາມ, ທຳນຽມຂອງການອະນຸຍາດສະເພາະແຕ່ສະມາຊິກ ແລະ ຜູ້ສົນໃຈແທ້ໆເທົ່ານັ້ນໃຫ້ເຂົ້າຮ່ວມກອງປະຊຸມສິນລະລຶກ ແລະ ການຊຸມນຸມອື່ນໆຂອງສາດສະໜາຈັກ ໄດ້ກາຍເປັນການປະຕິບັດໂດຍທົ່ວໄປ. ການເປີດເຜີຍນີ້ສະແດງໃຫ້ເຫັນເຖິງພຣະປະສົງຂອງພຣະຜູ້ເປັນເຈົ້າກ່ຽວກັບການຄວບຄຸມ ແລະ ການດຳເນີນການປະ*

---

66 *ງ* ອຊຢ 4:6; ຄພ 115:6.
67 *ກ* ຄພ 64:41–43; 97:15–18.
ຄມພ ພຣະເຢຊູຄຣິດ—
ລັດສະໝີພາບຂອງ
ພຣະເຢຊູຄຣິດ.
69 *ກ* ພບຍ 30:3;
ຢມຢ 32:37–39;
ຄພ 33:6.
74 *ກ* ຊຟຢ 2:11.

*ຊຸມ ແລະ ການແນະນຳຂອງພຣະອົງ ເລື່ອງການສະແຫວງຫາ ແລະ ການຫລິງເຫັນຂອງປະທານແຫ່ງພຣະວິນຍານ.*

*1–2, ແອວເດີຕ້ອງດຳເນີນການປະຊຸມຕາມທີ່ໄດ້ຮັບການນຳພາຈາກພຣະວິນຍານສັກສິດ; 3–6, ຜູ້ສະແຫວງຫາຄວາມຈິງບໍ່ຄວນຖືກກີດກັນຈາກກອງປະຊຸມສິນລະລຶກ; 7–12, ຈົ່ງທູນຂໍຈາກພຣະເຈົ້າ ແລະ ສະແຫວງຫາຂອງປະທານແຫ່ງພຣະວິນຍານ; 13–26, ລາຍການຂອງປະທານບາງຢ່າງຖືກມອບໃຫ້; 27–33, ຜູ້ນຳຂອງສາດສະໜາຈັກໄດ້ຮັບອຳນາດໃນການຫລິງເຫັນຂອງປະທານແຫ່ງພຣະວິນຍານ.*

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າຜູ້ຄົນແຫ່ງ
ສາດ ສະ ໜາ ຈັກ ຂອງ ເຮົາ; ເພາະ ຕາມ
ຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ
ເລື່ອງເຫລົ່ານີ້ຖືກກ່າວກັບພວກເຈົ້າ ເພື່ອ
[ກ]ຜົນປະໂຫຍດ ແລະ ການຮຽນຮູ້ຂອງພວກ
ເຈົ້າ.
2 ແຕ່ເຖິງແມ່ນວ່າເລື່ອງເຫລົ່ານັ້ນມີຂຽນ
ໄວ້ແລ້ວ, ແຕ່ກໍຖືກມອບໃຫ້ແກ່ [ກ]ແອວເດີ
ຂອງສາດສະໜາຈັກຂອງເຮົາສະເໝີມາ
ຕັ້ງແຕ່ຕົ້ນ, ແລະ ຈະເປັນໄປຕະຫລອດ,
ເພື່ອ [ຂ]ດຳເນີນການປະຊຸມທັງໝົດຕາມທີ່
ເຂົາເຈົ້າໄດ້ຮັບການນຳພາຈາກພຣະວິນ
ຍານສັກສິດ.
3 ເຖິງຢ່າງໃດກໍຕາມ ພວກເຈົ້າໄດ້ຮັບ
ບັນຊາບໍ່ໃຫ້ [ກ]ໄລ່ຄົນໃດອອກຈາກກອງປະ
ຊຸມສາທາລະນະຂອງພວກເຈົ້າ, ຊຶ່ງມີຢູ່ຕໍ່
ໜ້າໂລກ.
4 ພວກເຈົ້າກໍໄດ້ຮັບບັນຊາອີກວ່າບໍ່ໃຫ້
ໄລ່ຄົນໃດທີ່ເປັນຂອງ [ກ]ສາດສະໜາຈັກ
ອອກໄປຈາກກອງປະຊຸມສິນລະລຶກຂອງ
ພວກເຈົ້າ; ເຖິງຢ່າງໃດກໍຕາມ, ຖ້າຫາກຄົນ
ໃດຄົນໜຶ່ງເຮັດຄວາມຜິດ, ກໍ [ຂ]ຢ່າໃຫ້ເຂົາ
ຮັບສ່ວນ ຈົນກວ່າເຂົາໄດ້ຄືນດີກ່ອນ.
5 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າວ່າ ຢ່າຂັບໄລ່ຄົນໃດທີ່ສະແຫວງຫາ
ອານາຈັກຢ່າງຕັ້ງໃຈອອກຈາກກອງປະຊຸມ
ສິນລະລຶກຂອງພວກເຈົ້າ—ເຮົາກ່າວເລື່ອງ
ນີ້ກ່ຽວກັບຄົນທີ່ບໍ່ໄດ້ເປັນຂອງສາດສະໜາ
ຈັກ.
6 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າ, ກ່ຽວກັບ [ກ]ການປະຊຸມຢືນຢັນຂອງ
ພວກເຈົ້າ, ວ່າຖ້າຫາກມີຄົນໃດທີ່ບໍ່ໄດ້ເປັນ
ຂອງສາດສະໜາຈັກ, ທີ່ສະແຫວງຫາອາ
ນາຈັກຢ່າງຕັ້ງໃຈ, ຢ່າໄລ່ເຂົາອອກໄປ.
7 ແຕ່ພວກເຈົ້າຖືກບັນຊາໃຫ້ [ກ]ທູນຂໍ
ຈາກພຣະເຈົ້າໃນທຸກສິ່ງ, ຜູ້ປະທານໃຫ້
ດ້ວຍພຣະກະລຸນາ; ແລະ ສິ່ງຊຶ່ງພຣະວິນ
ຍານເປັນພະຍານແກ່ພວກເຈົ້າ ແມ່ນແຕ່
ເຊັ່ນນັ້ນເຮົາຢາກໃຫ້ພວກເຈົ້າເຮັດດ້ວຍ
ໃຈ [ຂ]ບໍລິສຸດທັງໝົດ, ໂດຍການເດີນໄປ
ຢ່າງພາກພູມໃຈຕໍ່ໜ້າເຮົາ, [ຄ]ພິຈາລະນາທີ່
ສຸດແຫ່ງຄວາມລອດຂອງພວກເຈົ້າ, ເຮັດ

**46** 1 *ກ* 2 ຕມທ 3:16–17.
2 *ກ* ແອວ 6:1.
*ຂ* ມຣນ 6:9; ຄພ 20:45.
3 *ກ* 3 ນຟ 18:22–25. ຄມພ ຜູກມິດ.
4 *ກ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
*ຂ* 3 ນຟ 18:26–32. ຄມພ ສິນລະລຶກ.
6 *ກ* ອສ ສຳລັບການຢືນຢັນຂອງຄົນທີ່ຫາກໍໄດ້ຮັບບັບຕິສະມາ.
7 *ກ* ຢກບ 1:5–6; ຄພ 88:63.
*ຂ* ຄມພ ສັກສິດ, ຄວາມສັກສິດ.
*ຄ* ຄມພ ໄຕ່ຕອງ.

ທຸກສິ່ງດ້ວຍຄຳອະທິຖານ ແລະ [ງ]ຄວາມ
ຂອບພຣະໄທ, ເພື່ອວ່າພວກເຈົ້າຈະບໍ່ໄດ້
[ຈ]ຖືກລໍ້ ໂດຍວິນຍານຮ້າຍ, ຫລື ຄຳສອນ
ຂອງ [ສ]ມານ, ຫລື [ຊ]ບັນຍັດຂອງມະນຸດ;
ເພາະບາງອັນເປັນຂອງມະນຸດ, ແລະ ບາງ
ອັນເປັນຂອງມານ.
8 ດັ່ງນັ້ນ, ຈົ່ງລະວັງ ຖ້າບໍ່ດັ່ງນັ້ນພວກ
ເຈົ້າຈະຖືກຫລອກລວງ; ແລະ ເພື່ອວ່າເຈົ້າ
ຈະບໍ່ຖືກຫລອກລວງ ຈົ່ງ [ກ]ສະແຫວງຫາ
ຂອງປະທານທີ່ດີທີ່ສຸດຢ່າງຕັ້ງໃຈ, ໂດຍຈື່
ຈຳສະເໝີວ່າ ມັນຖືກມອບໃຫ້ເພື່ອສິ່ງໃດ;
9 ເພາະຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ມັນຖືກມອບໃຫ້ເພື່ອ
ຜົນປະໂຫຍດຂອງຜູ້ທີ່ຮັກເຮົາ ແລະ ຮັກ
ສາບັນຍັດທັງໝົດຂອງເຮົາ, ແລະ ຄົນທີ່
ສະແຫວງຫາທີ່ຈະເຮັດແນວນັ້ນ; ເພື່ອທຸກ
ຄົນທີ່ສະແຫວງຫາ ຫລື ທູນຂໍຈາກເຮົາຈະ
ໄດ້ຮັບຜົນປະໂຫຍດ, ທີ່ທູນຂໍ ແລະ ບໍ່ແມ່ນ
ສຳລັບ [ກ]ເຄື່ອງໝາຍ ເພື່ອຈະ [ຂ]ໃຊ້ມັນສຳ
ລັບຄວາມຕັນຫາລາມົກຂອງເຂົາ.
10 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາຢາກ
ໃຫ້ພວກເຈົ້າຈື່ຈຳສະເໝີ, ແລະ ເກັບໄວ້ໃນ
[ກ]ຈິດໃຈຂອງພວກເຈົ້າສະເໝີວ່າ [ຂ]ຂອງ
ປະທານເຫລົ່ານັ້ນຄືຫຍັງ, ທີ່ມອບໃຫ້ແກ່
ສາດສະໜາຈັກ.
11 ເພາະທຸກຄົນບໍ່ໄດ້ຮັບຂອງປະທານ
ທັງໝົດໃຫ້ຕົນເອງ; ເພາະມີຂອງປະທານ
ຫລາຍຢ່າງ, ແລະ ແກ່ [ກ]ທຸກຄົນ ຂອງ
ປະທານຖືກມອບໃຫ້ໂດຍພຣະວິນຍານ
ຂອງພຣະເຈົ້າ.
12 ແກ່ ບາງ ຄົນ ມັນ ຖືກ ມອບ ໃຫ້ ຢ່າງ
ໜຶ່ງ, ແລະ ອີກບາງຄົນມັນຖືກມອບໃຫ້ອີກ
ຢ່າງໜຶ່ງ, ເພື່ອວ່າທຸກຄົນຈະໄດ້ຮັບຜົນປະ
ໂຫຍດດ້ວຍການນັ້ນ.
13 ແກ່ ບາງ ຄົນ ມັນ ຖືກ ມອບ ໃຫ້ ໂດຍ
ພຣະວິນຍານບໍລິສຸດ ເພື່ອຈະ [ກ]ຮູ້ວ່າພຣະ
ເຢຊູຄຣິດຄືພຣະບຸດຂອງພຣະເຈົ້າ, ແລະ
ວ່າພຣະອົງໄດ້ຖືກຄຶງເພື່ອບາບຂອງໂລກ.
14 ແກ່ບາງຄົນມັນຖືກມອບໃຫ້ເພື່ອຈະ
[ກ]ເຊື່ອຖ້ອຍຄຳຂອງເຂົາ, ເພື່ອວ່າເຂົາຈະ
ໄດ້ຮັບຊີວິດນິລັນດອນຄືກັນ ຖ້າຫາກເຂົາ
ຊື່ສັດຕໍ່ໄປ.
15 ແລະ ອີກເທື່ອໜຶ່ງ, ແກ່ບາງຄົນ ມັນ
ຖືກ ມອບ ໃຫ້ ໂດຍພຣະວິນຍານບໍລິສຸດ
ເພື່ອຈະຮູ້ຈັກ [ກ]ຄວາມແຕກຕ່າງຂອງການ
ບໍລິຫານງານ, ດັ່ງທີ່ຈະເປັນສິ່ງທີ່ພໍພະໄທ
ຕໍ່ພຣະຜູ້ເປັນເຈົ້າອົງດຽວກັນ, ຕາມທີ່ພຣະ
ຜູ້ເປັນເຈົ້າຈະປະສົງ, ເໝາະສົມຕໍ່ຄວາມ
ເມດຕາຂອງພຣະອົງຕາມສະພາບຂອງ
ລູກຫລານມະນຸດ.
16 ແລະ ອີກເທື່ອໜຶ່ງ, ມັນຖືກມອບໃຫ້
ໂດຍພຣະວິນຍານບໍລິສຸດແກ່ບາງຄົນ ເພື່ອ
ຈະຮູ້ຈັກປະເພດຂອງການດຳເນີນງານ, ບໍ່
ວ່າມັນເປັນຂອງພຣະເຈົ້າຫລືບໍ່, ເພື່ອວ່າ
ການສະແດງໃຫ້ປະຈັກຂອງພຣະວິນຍານ
ຈະຖືກມອບໃຫ້ແກ່ມະນຸດທຸກຄົນ ເພື່ອຈະ
ໄດ້ຮັບຜົນປະໂຫຍດດ້ວຍການນັ້ນ.
17 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ແກ່ບາງ

7 ງ ພສສ 100;
ແອວ 34:38.
ຄມພ ຂອບຄຸນ, ຂອບ
ໃຈ, ຄວາມຂອບຄຸນ.
ຈ 1 ຕມທ 4:1–4;
ຄພ 43:5–7.
ສ ຄມພ ມານ.
ຊ ຄພ 3:6–7; 45:29.
8 ກ 1 ກຣທ 12:31.
9 ກ ຄມພ ເຄື່ອງໝາຍ.
ຂ ຢກບ 4:3.
10 ກ ຄມພ ຈິດໃຈ.
ຂ 1 ກຣທ 14:12.
ຄມພ ຂອງປະທານ
ແຫ່ງພຣະວິນຍານ.
11 ກ 1 ກຣທ 12:4–11.
13 ກ ຄມພ ປະຈັກພະຍານ.
14 ກ 3 ນຟ 12:2.
ຄມພ ເຊື່ອ, ຄວາມເຊື່ອ.
15 ກ ມຣນ 10:8.

ຄົນພຣະວາຈາແຫ່ງ [ກ]ປັນຍາໄດ້ຖືກມອບ
ໃຫ້ໂດຍພຣະວິນຍານຂອງພຣະເຈົ້າ.
18 ແກ່ ອີກ ຄົນ ໜຶ່ງ ໄດ້ ຮັບ ຄຳ ແຫ່ງ
[ກ]ຄວາມຮູ້, ເພື່ອວ່າທຸກຄົນຈະໄດ້ຮັບການ
ສິດສອນໃຫ້ສະຫລາດ ແລະ ມີຄວາມຮູ້.
19 ແລະ ອີກເທື່ອໜຶ່ງ, ແກ່ບາງຄົນມັນ
ຖືກມອບໃຫ້ເພື່ອຈະມີ [ກ]ສັດທາທີ່ຈະຮັບ
ການປິ່ນປົວ;
20 ແລະ ແກ່ຄົນອື່ນໆມັນຖືກມອບໃຫ້
ເພື່ອຈະມີສັດທາທີ່ຈະ [ກ]ປິ່ນປົວ.
21 ແລະ ອີກເທື່ອໜຶ່ງ, ແກ່ບາງຄົນມັນ
ຖືກມອບໃຫ້ເພື່ອເຮັດວຽກງານແຫ່ງ [ກ]ການ
ມະຫັດສະຈັນ;
22 ແລະ ແກ່ຄົນອື່ນໆມັນຖືກມອບໃຫ້
ເພື່ອ [ກ]ທຳນາຍ;
23 ແລະ ແກ່ຄົນອື່ນໆມັນຖືກມອບໃຫ້
ເພື່ອ [ກ]ຫລິງເຫັນວິນຍານ.
24 ແລະ ອີກເທື່ອໜຶ່ງ, ມັນຖືກມອບໃຫ້
ແກ່ບາງຄົນເພື່ອເວົ້າ [ກ]ພາສາຕ່າງໆ;
25 ແລະ ແກ່ອີກຄົນໜຶ່ງມັນຖືກມອບໃຫ້
ເພື່ອແປພາສາ.
26 ແລະ [ກ]ຂອງປະທານທັງໝົດນີ້ມາ
ຈາກພຣະເຈົ້າ, ເພື່ອຜົນປະໂຫຍດຂອງ
[ຂ]ລູກໆຂອງພຣະເຈົ້າ.
27 ແລະ ແກ່ [ກ]ອະທິການຂອງສາດສະ
ໜາຈັກ, ແລະ ແກ່ຄົນເຊັ່ນນັ້ນຕາມທີ່ພຣະ
ເຈົ້າຈະກຳນົດ ແລະ ແຕ່ງຕັ້ງໃຫ້ດູແລສາດ
ສະໜາຈັກ ແລະ ເພື່ອເປັນແອວເດີສຳລັບ
ສາດສະໜາຈັກ, ຈະຖືກມອບໃຫ້ເຂົາເພື່ອ
[ຂ]ຫລິງເຫັນຂອງປະທານເຫລົ່ານັ້ນທັງໝົດ
ຖ້າບໍ່ດັ່ງນັ້ນຈະມີບາງຄົນໃນບັນດາພວກ
ເຈົ້າເວົ້າອ້າງ ແຕ່ບໍ່ໄດ້ເປັນຂອງພຣະເຈົ້າ.
28 ແລະ ເຫດການຈະບັງເກີດຂຶ້ນຄື ຄົນ
ທີ່ທູນຂໍໂດຍ [ກ]ພຣະວິນຍານຈະໄດ້ຮັບ
ໂດຍພຣະວິນຍານ;
29 ເພື່ອວ່າແກ່ບາງຄົນມັນຈະຖືກມອບ
ໃຫ້ເພື່ອໃຫ້ມີຂອງປະທານເຫລົ່ານັ້ນທັງ
ໝົດ, ເພື່ອວ່າຈະມີຫົວໜ້າ, ເພື່ອສະມາຊິກ
ທຸກຄົນຈະໄດ້ຮັບຜົນປະໂຫຍດໃນການ
ນັ້ນ.
30 ຄົນທີ່ [ກ]ທູນຂໍໃນ [ຂ]ພຣະວິນຍານແມ່ນ
ທູນຂໍຕາມ [ຄ]ພຣະປະສົງຂອງພຣະເຈົ້າ; ດັ່ງ
ນັ້ນ ມັນຈຶ່ງເກີດຂຶ້ນຕາມທີ່ເຂົາທູນຂໍ.
31 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ທຸກສິ່ງຈະຕ້ອງຖືກກະທຳໃນພຣະ
ນາມຂອງພຣະຄຣິດ, ສິ່ງໃດກໍຕາມທີ່ພວກ
ເຈົ້າເຮັດໂດຍພຣະວິນຍານ;
32 ແລະ ພວກເຈົ້າຕ້ອງ [ກ]ຂອບພຣະໄທ
ພຣະເຈົ້າໂດຍພຣະວິນຍານສຳລັບພອນ
ໃດກໍຕາມທີ່ພວກເຈົ້າໄດ້ຮັບ.
33 ແລະ ພວກ ເຈົ້າຕ້ອງປະຕິບັດ
ດ້ວຍ [ກ]ຄຸນນະທຳ ແລະ [ຂ]ຄວາມບໍລິສຸດ
ຢູ່ຕໍ່ໜ້າເຮົາສະເໝີໄປ. ແມ່ນເປັນດັ່ງນັ້ນ.
ອາແມນ.

17 *ກ* ມຣນ 10:9.
ຄມພ ສະຕິປັນຍາ.
18 *ກ* ຄມພ ຄວາມຮູ້.
19 *ກ* ຄພ 42:48–52.
ຄມພ ສັດທາ.
20 *ກ* ຄມພ ປິ່ນປົວ, ການປິ່ນປົວ.
21 *ກ* ຄມພ ມະຫັດສະຈັນ, ການມະຫັດສະຈັນ.
22 *ກ* ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.
23 *ກ* ມຊ 1:13–15.
24 *ກ* ຄມພ ການເວົ້າພາສາ, ຂອງປະທານແຫ່ງ.
26 *ກ* ມຣນ 10:8–19.
*ຂ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
27 *ກ* ຄມພ ອະທິການ.
*ຂ* ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
28 *ກ* ຄພ 88:64–65.
30 *ກ* ຄພ 50:29.
*ຂ* ຄມພ ພຣະວິນຍານບໍລິສຸດ.
*ຄ* 2 ນຟ 4:35.
32 *ກ* 1 ຂຄ 16:8–15; 1 ທສນ 1:2; ແອວ 37:37; ຄພ 59:7, 21. ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
33 *ກ* ຄມພ ຄຸນນະທຳ.
*ຂ* ຄມພ ສັກສິດ, ຄວາມສັກສິດ.

# ພາກທີ 47

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 8 ເດືອນມີນາ, 1831. ຈອນ ວິດເມີ, ຜູ້ໄດ້ຮັບໃຊ້ມາແລ້ວ ໃນຖານະເປັນສະໝຽນໃຫ້ສາດສະດາ, ຕອນຕົ້ນກໍລັງເລ ຕອນລາວໄດ້ຖືກຂໍໃຫ້ຮັບໃຊ້ ເປັນຜູ້ບັນທຶກປະຫວັດສາດຂອງສາດສະໜາຈັກ, ແທນອໍລີເວີ ຄາວເດີຣີ. ລາວໄດ້ຂຽນວ່າ, "ຂ້າພະເຈົ້າກໍບໍ່ຢາກເປັນດອກ ພຽງແຕ່ຢາກສັງເກດເບິ່ງ ພຣະປະສົງຂອງພຣະຜູ້ເປັນເຈົ້າ ຈະສຳເລັດແນວໃດ, ແລະ ຖ້າຫາກພຣະອົງປະສົງໃຫ້ຂ້າພະເຈົ້າເປັນ, ຂ້າພະເຈົ້າ ກໍຂໍໃຫ້ພຣະອົງສະແດງໃຫ້ປະຈັກແກ່ໂຈເຊັບ ຜູ້ພະຍາກອນ." ຫລັງຈາກໂຈເຊັບ ສະມິດ ໄດ້ຮັບການເປີດເຜີຍນີ້, ຈອນ ວິດເມີ ກໍໄດ້ຍອມຮັບ ແລະ ໄດ້ຮັບໃຊ້ ໃນໜ້າທີ່ມອບໝາຍຂອງລາວ.*

*1–4, ຈອນ ວິດເມີ ຖືກກຳນົດໃຫ້ຮັກສາປະຫວັດສາດຂອງສາດສະໜາຈັກ ແລະ ຂຽນໃຫ້ສາດສະດາ.*

1 ຈົ່ງ ເບິ່ງ, ເຮົາ ເຫັນ ສົມ ຄວນ ທີ່ ຜູ້ ຮັບ
ໃຊ້ຂອງເຮົາ ຈອນ ຈະຂຽນ ແລະ ບັນທຶກ
[a]ປະຫວັດ ສາດ ເປັນປະຈຳ, ແລະ ຊ່ວຍ
ເຫລືອເຈົ້າ, ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ໃນ
ການຂຽນທຸກເລື່ອງ ຊຶ່ງຈະຖືກມອບໃຫ້ແກ່
ເຈົ້າ, ຈົນກວ່າລາວຖືກເອີ້ນໃຫ້ເຮັດໜ້າທີ່
ອື່ນຕໍ່ໄປ.
2 ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບເຈົ້າວ່າ ລາວຍັງສາມາດເປັ່ງສຽງ
ຂອງລາວອີກໃນກອງປະຊຸມນຳອີກ, ເມື່ອ
ໃດກໍຕາມທີ່ຈະເປັນການສົມຄວນ.
3 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບເຈົ້າ
ວ່າ ຈະກຳນົດລາວໃຫ້ຮັກສາບັນທຶກຂອງ
ສາດສະໜາຈັກ ແລະ ປະຫວັດສາດຕໍ່ໆ
ໄປ; ເພາະເຮົາໄດ້ກຳນົດອໍລີເວີ ຄາວເດີຣີ
ຕໍ່ຕຳແໜ່ງອື່ນ.
4 ດັ່ງ ນັ້ນ, ມັນ ຈະ ຖືກ ມອບ ໃຫ້ ລາວ,
ຕາບໃດທີ່ລາວຊື່ສັດ, ໂດຍ [a]ພຣະຜູ້ປອບ
ໂຍນ, ເພື່ອຂຽນເລື່ອງເຫລົ່ານີ້. ແມ່ນເປັນ
ດັ່ງນັ້ນ. ອາແມນ.

# ພາກທີ 48

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 10 ເດືອນມີນາ, 1831. ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບວິທີດຳເນີນການຈັດຫາທີ່ດິນໃຫ້ໄພ່ພົນຂອງພຣະເຈົ້າເພື່ອຕັ້ງຖິ່ນຖານ. ນີ້ເປັນເລື່ອງສຳຄັນເນື່ອງດ້ວຍການອົບພະຍົບຂອງສະມາຊິກຈາກພາກຕາເວັນອອກຂອງສະຫະລັດ, ໃນການເຊື່ອຟັງຕໍ່ພຣະບັນຊາຂອງພຣະຜູ້ເປັນເຈົ້າວ່າໃຫ້ເຂົາເຈົ້າໄປເຕົ້າໂຮມກັນໃນລັດໂອໄຮໂອ (ເບິ່ງ ພາກທີ 37:1–3; 45:64).*

---

**47** 1 *ກ* ຄພ 69:2–8; 85:1–2.
4 *ກ* ຄມພ ພຣະຜູ້ປອບໂຍນ; ພຣະວິນຍານບໍລິສຸດ.

*1–3, ໄພ່ພົນຂອງພຣະເຈົ້າໃນລັດໂອໄຮ
ໂອຕ້ອງແບ່ງປັນທີ່ດິນໃຫ້ພີ່ນ້ອງຂອງເຂົາ
ເຈົ້າ; 4–6, ໄພ່ພົນຂອງພຣະເຈົ້າຕ້ອງຊື້ທີ່
ດິນ, ສ້າງເມືອງ, ແລະ ປະຕິບັດຕາມຄຳ
ແນະນຳຂອງເຈົ້າໜ້າທີ່ຄວບຄຸມຂອງເຂົາ
ເຈົ້າ.*

1 ມັນຈຳເປັນທີ່ເຈົ້າຈະຄົງຢູ່ສຳລັບເວລາ
ນີ້ ໃນບ້ານເຮືອນທີ່ເຈົ້າອາໄສຢູ່, ດັ່ງທີ່ມັນ
ຈະເໝາະສົມກັບສະພາບການຂອງເຈົ້າ.

2 ແລະ ຕາບໃດທີ່ເຈົ້າມີທີ່ດິນຢູ່, ຈົ່ງ
[ກ]ແບ່ງມັນໃຫ້ພີ່ນ້ອງທີ່ມາຈາກພາກຕາເວັນ
ອອກ;

3 ແລະ ຕາບໃດທີ່ເຈົ້າບໍ່ມີທີ່ດິນ, ກໍໃຫ້
ພວກ ເຂົາຊື້ສຳລັບ ເວລານີ້ໃນພາກພື້ນ
ຕ່າງໆທີ່ອ້ອມຮອບເຫລົ່ານັ້ນ, ດັ່ງທີ່ພວກ
ເຂົາເຫັນວ່າດີ, ເພາະຈຳເປັນວ່າພວກເຂົາ
ຕ້ອງມີບ່ອນຢູ່ໃນເວລານີ້.

4 ຖືວ່າຈຳເປັນທີ່ເຈົ້າຕ້ອງເກັບທ້ອນເງິນ
ຄຳທັງໝົດທີ່ເຈົ້າສາມາດເຮັດໄດ້, ແລະ ວ່າ
ເຈົ້າຈະໄດ້ຮັບເອົາທັງໝົດທີ່ເຈົ້າສາມາດ
ໄດ້ຮັບໃນຄວາມຊອບທຳ, ເພື່ອວ່າເຈົ້າຈະ
ສາມາດ [ກ]ຊື້ທີ່ດິນເປັນມູນມໍລະດົກໃນມື້
ໜຶ່ງ, [ຂ]ແມ່ນແຕ່ເມືອງນັ້ນ.

5 ສະຖານທີ່ຍັງບໍ່ຖືກເປີດເຜີຍໃຫ້ຮູ້ເທື່ອ;
ແຕ່ຫລັງຈາກພີ່ນ້ອງຂອງເຈົ້າມາຈາກພາກ
ຕາເວັນອອກ ຈະມີ [ກ]ຜູ້ຊາຍບາງຄົນຖືກກຳ
ນົດໄວ້, ແລະ ຈະບອກພວກເຂົາໃຫ້ [ຂ]ຮູ້
ຈັກສະຖານທີ່ນັ້ນ, ຫລື ຈະເປີດເຜີຍມັນໃຫ້
ພວກເຂົາຮູ້.

6 ແລະ ພວກເຂົາຈະຖືກກຳນົດໃຫ້ຊື້ທີ່
ດິນ, ແລະ ໃຫ້ທຳການເລີ່ມຕົ້ນວາງຮາກ
ຖານຂອງ [ກ]ເມືອງ; ແລະ ຈາກນັ້ນ ເຈົ້າຈະ
ເລີ່ມຕົ້ນເຕົ້າໂຮມກັນເຂົ້າກັບຄອບຄົວຂອງ
ເຈົ້າ, ທຸກຄົນຕາມ [ຂ]ຄອບຄົວຂອງເຂົາ,
ຕາມສະພາບການຂອງເຂົາ, ແລະ ດັ່ງທີ່
ໄດ້ກຳນົດໃຫ້ເຂົາໂດຍຝ່າຍປະທານ ແລະ
ອະທິການຂອງສາດສະໜາຈັກ, ຕາມກົດ
ແລະ ບັນຍັດ ຊຶ່ງເຈົ້າໄດ້ຮັບ, ແລະ ຊຶ່ງເຈົ້າ
ຈະໄດ້ຮັບໃນພາຍຂ້າງໜ້າ. ແມ່ນເປັນດັ່ງ
ນັ້ນ. ອາແມນ.

## ພາກທີ 49

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ຊິດນີ ຣິກດອນ, ພາລີ ພີ ພະແຣັດ, ແລະ ລີມັນ ຄອບລີ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 7 ເດືອນພຶດສະພາ, 1831. ລີມັນ ຄອບລີ ໄດ້ຮັບເອົາພຣະກິດຕິຄຸນ ແຕ່ຍັງເຊື່ອຄຳສອນບາງຢ່າງຂອງນິກາຍເຊເກີຢູ່ (*Shakers—United Society of Believers in Christ's Second Appearing*) ແປວ່າ ສະມາຄົມເຊເກີຂອງຜູ້ເຊື່ອໃນການມາປະກົດຄັ້ງທີສອງຂອງພຣະຄຣິດ, ຊຶ່ງລາວເຄີຍເປັນສະມາຊິກໃນສະມາຄົມນີ້. ຄວາມເຊື່ອບາງຢ່າງຂອງນິກາຍເຊເກີ ຄືການສະເດັດມາຂອງພຣະຄຣິດຄັ້ງທີສອງໄດ້ເກີດຂຶ້ນແລ້ວ ແລະ ວ່າພຣະອົງໄດ້ມາປະກົດໃນຮູບຮ່າງຂອງສະຕີ, ຄື ແອນ ລີ. ເຂົາເຈົ້າບໍ່ເຊື່ອວ່າ ການບັບຕິສະມາໂດຍນ້ຳ*

**48** 2 *ກ* ຄມພ ຄວາມຜາສຸກ.
4 *ກ* ຄພ 57:4–5.
*ຂ* ຄພ 42:35–36; 45:65–67.
5 *ກ* ຄພ 57:6–8.
*ຂ* ຄພ 57:1–3.
6 *ກ* ຄມພ ເຢຣູຊາເລັມໃໝ່.
*ຂ* ຄພ 51:3.

*ເປັນສິ່ງຈຳເປັນ. ເຂົາເຈົ້າປະຕິເສດການແຕ່ງງານ ແລະ ເຊື່ອໃນການຢູ່ເປັນໂສດ. ຊາວເຊເກີ ບາງຄົນ ຍັງຖືກສັ່ງຫ້າມບໍ່ໃຫ້ກິນຊີ້ນນຳອີກ. ໃນບົດຄຳນຳຕໍ່ການເປີດເຜີຍນີ້, ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ, "ເພື່ອຈະມີຄວາມເຂົ້າໃຈຢ່າງເຖິງຖອງກ່ຽວກັບເລື່ອງນີ້, ຂ້າພະເຈົ້າຈຶ່ງໄດ້ທູນຖາມພຣະຜູ້ເປັນເຈົ້າ, ແລະ ໄດ້ຮັບດັ່ງຕໍ່ໄປນີ້." ການເປີດເຜີຍພິສູດໃຫ້ເຫັນວ່າຄຳສອນບາງຢ່າງຂອງກຸ່ມເຊເກີບໍ່ຖືກຕ້ອງ. ບັນດາອ້າຍນ້ອງທີ່ກ່າວມາຂ້າງເທິງໄດ້ເອົາການເປີດເຜີຍໄປສະເໜີຕໍ່ຊຸມຊົນເຊເກີ (ໃກ້ເມືອງຄລີບແລນ, ລັດໂອໄຮໂອ) ແລະ ອ່ານມັນໃຫ້ທຸກຄົນໃນພວກເຂົາຟັງ, ແຕ່ຖືກປະຕິເສດ.*

*1–7, ວັນ ແລະ ຊົ່ວໂມງແຫ່ງການສະເດັດມາຂອງພຣະຄຣິດຈະບໍ່ມີໃຜຮູ້ຈົນກວ່າພຣະອົງສະເດັດມາ; 8–14, ມະນຸດຕ້ອງກັບໃຈ, ເຊື່ອພຣະກິດຕິຄຸນ, ແລະ ເຊື່ອຟັງຕໍ່ພິທີການເພື່ອຈະໄດ້ຮັບຄວາມລອດ; 15–16, ການແຕ່ງງານໄດ້ຮັບການແຕ່ງຕັ້ງຈາກພຣະເຈົ້າ; 17–21, ການກິນຊີ້ນໄດ້ຮັບການອະນຸຍາດ; 22–28, ຊີໂອນຈະຮຸ່ງເຮືອງ ແລະ ຊາວເລມັນຈະບານສະພັ່ງເໝືອນດັ່ງດອກກຸຫລາບກ່ອນການສະເດັດມາຄັ້ງທີສອງ.*

1 ຈົ່ງເຊື່ອຟັງຖ້ອຍຄຳຂອງເຮົາ, ຜູ້ຮັບໃຊ້ຂອງເຮົາ ຊິດນີ, ແລະ ພາລີ, ແລະ ລີມັນ; ເພາະຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາມອບບັນຍັດຂໍ້ໜຶ່ງໃຫ້ພວກເຈົ້າ ເພື່ອວ່າພວກເຈົ້າຈະໄປ ແລະ [ກ]ສັ່ງສອນພຣະກິດຕິຄຸນຂອງເຮົາ ຊຶ່ງພວກເຈົ້າໄດ້ຮັບ, ແມ່ນແຕ່ດັ່ງທີ່ພວກເຈົ້າໄດ້ຮັບມັນ, ໃຫ້ແກ່ນິກາຍເຊເກີ.

2 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ ພວກເຂົາປາດຖະໜາຢາກຮູ້ຄວາມຈິງບາງຢ່າງ, ແຕ່ບໍ່ແມ່ນທັງໝົດ, ເພາະພວກເຂົາບໍ່ [ກ]ຖືກຕ້ອງຢູ່ຕໍ່ໜ້າເຮົາ ແລະ ຈຳເປັນຕ້ອງກັບໃຈ.

3 ດັ່ງນັ້ນ, ເຮົາຈຶ່ງສົ່ງພວກເຈົ້າ, ຜູ້ຮັບໃຊ້ຂອງເຮົາ ຊິດນີ ແລະ ພາລີ, ໃຫ້ໄປສັ່ງສອນພຣະກິດຕິຄຸນໃຫ້ແກ່ພວກເຂົາ.

4 ແລະ ຜູ້ຮັບໃຊ້ຂອງເຮົາ ລີມັນ ຈະຖືກແຕ່ງຕັ້ງສູ່ວຽກງານນີ້, ເພື່ອວ່າລາວຈະໄດ້ຊີ້ແຈງກັບພວກເຂົາ, ບໍ່ແມ່ນຕາມສິ່ງທີ່ລາວໄດ້ຮັບຈາກພວກເຂົາ, ແຕ່ຕາມສິ່ງທີ່ລາວຈະໄດ້ຮັບການ [ກ]ສິດສອນຈາກພວກເຈົ້າ ຜູ້ຮັບໃຊ້ຂອງເຮົາ; ແລະ ໂດຍການເຮັດເຊັ່ນນັ້ນ ເຮົາຈະໄດ້ອວຍພອນລາວ, ຖ້າບໍ່ດັ່ງນັ້ນ ລາວຈະບໍ່ຈະເລີນກ້າວໜ້າ.

5 ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້; ເພາະເຮົາຄືພຣະເຈົ້າ, ແລະ ໄດ້ [ກ]ສົ່ງພຣະບຸດອົງດຽວທີ່ຖືກຳເນີດຂອງເຮົາມາຍັງໂລກເພື່ອ [ຂ]ການໄຖ່ໂລກ, ແລະ ໄດ້ອອກຄຳສັ່ງວ່າ ຄົນທີ່ຮັບເອົາພຣະອົງຈະລອດ, ແລະ ຄົນທີ່ບໍ່ຮັບເອົາພຣະອົງຈະ [ຄ]ອັບປະໂຫຍດ—

6 ແລະ ພວກເຂົາໄດ້ເຮັດກັບ [ກ]ບຸດມະນຸດ ແມ່ນແຕ່ດັ່ງທີ່ພວກເຂົາປາດຖະໜາ; ແລະ ພຣະອົງໄດ້ຮັບອຳນາດຂອງພຣະອົງຢູ່ທາງ [ຂ]ເບື້ອງຂວາພຣະຫັດແຫ່ງ

**49** 1*ກ* ຄມພ ສັ່ງສອນ.
2*ກ* ກຈກ 8:21.
4*ກ* ຄມພ ຈິງ, ຄວາມຈິງ; ພຣະກິດຕິຄຸນ.
5*ກ* ຢຮ 3:16–17; ຄພ 132:24. ຄມພ ພຣະເຢຊູຄຣິດ—ສິດອຳນາດ.
*ຂ* ຄມພ ໄຖ່, ການໄຖ່, ຖືກໄຖ່; ພຣະຜູ້ໄຖ່.
*ຄ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
6*ກ* ຄມພ ບຸດມະນຸດ.
*ຂ* ກຈກ 7:55–56; ຄພ 76:20–23.

[ຄ]ລັດສະໝີພາບຂອງພຣະອົງ, ແລະ ບັດ
ນີ້ໄດ້ປົກຄອງຢູ່ໃນຟ້າສະຫວັນ, ແລະ ຈະ
ປົກຄອງຈົນກວ່າພຣະອົງລົງມາເທິງແຜ່ນ
ດິນໂລກ ແລະ ເຮັດໃຫ້ສັດຕູທັງໝົດຢູ່ [ງ]ໃຕ້
ພຣະບາດຂອງພຣະອົງ, ຊຶ່ງເວລາໃກ້ຈະ
ມາເຖິງແລ້ວ—
7 ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ກ່າວມັນ
ໄວ້ດັ່ງນີ້; ແຕ່ຊົ່ວໂມງ ແລະ [ກ]ວັນນັ້ນບໍ່ມີ
ຄົນໃດຮູ້, ທັງເຫລົ່າທູດໃນສະຫວັນກໍບໍ່ຮູ້,
ແລະ ພວກເຂົາຈະບໍ່ຮູ້ຈົນກວ່າພຣະອົງສະ
ເດັດມາ.
8 ດັ່ງນັ້ນ, ເຮົາປະສົງໃຫ້ມະນຸດທັງປວງ
ກັບໃຈ, ເພາະທຸກຄົນຢູ່ພາຍໃຕ້ [ກ]ບາບ,
ຍົກເວັ້ນແຕ່ຄົນເຫລົ່ານັ້ນທີ່ເຮົາສະຫງວນ
ໄວ້ໃຫ້ແກ່ເຮົາເອງ, ຄົນ [ຂ]ບໍລິສຸດທີ່ພວກ
ເຈົ້າບໍ່ຮູ້ຈັກ.
9 ດັ່ງນັ້ນ, ເຮົາກ່າວກັບພວກເຈົ້າວ່າ ເຮົາ
ໄດ້ສົ່ງ [ກ]ພັນທະສັນຍາອັນເປັນນິດຂອງ
ເຮົາມາໃຫ້ພວກເຈົ້າ, ແມ່ນຕັ້ງແຕ່ຕົ້ນ
10 ແລະ ວ່າສິ່ງໃດທີ່ເຮົາໄດ້ສັນຍາ ເຮົາ
ຈະເຮັດສິ່ງນັ້ນໃຫ້ສຳເລັດຜົນ, ແລະ [ກ]ປະ
ຊາຊາດຂອງແຜ່ນດິນໂລກຈະ [ຂ]ກົ້ມຂາບ
ມັນ; ແລະ, ຖ້າຫາກເຂົາບໍ່ໄດ້ກົ້ມຂາບລົງ
ດ້ວຍຕົວເຂົາເອງ, ເຂົາຈະຕົກຕ່ຳ, ເພາະ
ສິ່ງຊຶ່ງບັດນີ້ສູງສົ່ງດ້ວຍຕົວມັນເອງ ຈະຖືກ
[ຄ]ຫລຸດອຳນາດລົງຕ່ຳ.
11 ດັ່ງນັ້ນ, ເຮົາຈຶ່ງມອບບັນຍັດຂໍ້ໜຶ່ງໃຫ້
ພວກເຈົ້າວ່າ ຈົ່ງ [ກ]ໄປໃນບັນດາຜູ້ຄົນເຫລົ່າ
ນີ້, ແລະ ກ່າວກັບພວກເຂົາ, ເໝືອນດັ່ງ
ອັກຄະສາວົກໃນສະໄໝບູຮານຂອງເຮົາ,
ຜູ້ຊື່ວ່າເປໂຕ ດັ່ງນີ້:
12 ຈົ່ງເຊື່ອໃນພຣະນາມຂອງອົງພຣະ
ເຢຊູ, ຜູ້ເຄີຍຢູ່ເທິງແຜ່ນດິນໂລກ, ແລະ ຈະ
ສະເດັດມາ, ຜູ້ເປັນຕົ້ນ ແລະ ທີ່ສຸດ;
13 ຈົ່ງ [ກ]ກັບໃຈ ແລະ ຮັບບັບຕິສະມາໃນ
ພຣະນາມຂອງພຣະເຢຊູຄຣິດ, ຕາມພຣະ
ບັນຍັດທີ່ສັກສິດ, ເພື່ອການປົດບາບ;
14 ແລະ ຜູ້ໃດທີ່ເຮັດສິ່ງນີ້ຈະໄດ້ຮັບ
[ກ]ຂອງປະທານແຫ່ງພຣະວິນຍານບໍລິສຸດ,
ໂດຍການວາງ [ຂ]ມືຂອງພວກແອວເດີຂອງ
ສາດສະໜາຈັກ.
15 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຜູ້ໃດກໍ
ຕາມທີ່ [ກ]ຫ້າມ [ຂ]ການແຕ່ງງານ ບໍ່ໄດ້ຮັບ
ການແຕ່ງຕັ້ງຈາກພຣະເຈົ້າ, ເພາະການ
ແຕ່ງງານໄດ້ຮັບການແຕ່ງຕັ້ງຈາກພຣະ
ເຈົ້າເພື່ອມະນຸດ.
16 ດັ່ງນັ້ນ, ມັນຈຶ່ງຖືກຕ້ອງຕາມກົດ
ໝາຍທີ່ເຂົາຄວນມີ [ກ]ເມຍຄົນໜຶ່ງ, ແລະ
ເຂົາທັງສອງຈະຕ້ອງເປັນ [ຂ]ເນື້ອດຽວກັນ,
ແລະ ທັງໝົດນີ້ເພື່ອວ່າ [ຄ]ແຜ່ນດິນໂລກຈະ
ສາມາດຕອບສະໜອງຈຸດປະສົງຂອງການ
ສ້າງຂອງມັນ;
17 ແລະ ເພື່ອວ່າມັນຈະເຕັມໄປດ້ວຍ

6 ຄ ຄມພ ພຣະເຢຊູຄຣິດ—ລັດສະໝີພາບຂອງພຣະເຢຊູຄຣິດ.
ງ 1 ກຣທ 15:25; ຄພ 76:61.
7 ກ ມທ 24:36; ມຣກ 13:32–37; ພນມ 16:15; ຄພ 133:11.
8 ກ ຄລຕ 3:22; ມຊຢ 16:3–5.
ຂ ຮຣ 13:2; 3 ນຟ 28:25–29.
9 ກ ປຖກ 17:7; ຄພ 66:2. ຄມພ ພັນທະສັນຍາໃໝ່ ແລະ ເປັນນິດ.
10 ກ ຊກຢ 2:11; ຄພ 45:66–69; 97:18–21.
ຂ ອຊຢ 60:14.
ຄ ມທ 23:12.
11 ກ ຄມພ ວຽກງານເຜີຍແຜ່.
13 ກ 3 ນຟ 27:19–20.
14 ກ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
ຂ ຄມພ ມື, ການວາງ.
15 ກ 1 ຕມທ 4:1–3.
ຂ ປຖກ 2:18, 24; 1 ກຣທ 11:11. ຄມພ ແຕ່ງງານ, ການແຕ່ງງານ.
16 ກ ຍຄ 2:27–30.
ຂ ປຖກ 2:24; ມທ 19:5–6.
ຄ ຄມພ ແຜ່ນດິນໂລກ—ໄດ້ຖືກສ້າງຂຶ້ນສຳລັບມະນຸດ.

ມະນຸດ, ຕາມ [ກ]ການສ້າງຂອງເຂົາ [ຂ]ກ່ອນ
ໂລກຖືກສ້າງຂຶ້ນ.
18 ແລະ ຜູ້ໃດກໍຕາມທີ່ [ກ]ສັ່ງຫ້າມໃຫ້ລະ
ເວັ້ນຈາກ [ຂ]ຊີ້ນ, ວ່າມະນຸດບໍ່ຄວນກິນຊີ້ນ
ນັ້ນຄືກັນ, ບໍ່ໄດ້ຮັບການແຕ່ງຕັ້ງຈາກພຣະ
ເຈົ້າ;
19 ເພາະ, ຈົ່ງເບິ່ງ, [ກ]ສັດຢູ່ໃນທົ່ງ ແລະ
ຝູງນົກຢູ່ໃນອາກາດ, ແລະ ສິ່ງຊຶ່ງມາຈາກ
ແຜ່ນດິນ, ໄດ້ຮັບການແຕ່ງຕັ້ງໄວ້ເພື່ອໃຫ້
ມະນຸດໃຊ້ເປັນອາຫານ ແລະ ເປັນເຄື່ອງ
ນຸ່ງຫົ່ມ, ແລະ ເພື່ອວ່າເຂົາຈະມີຄວາມອຸດົມ
ສົມບູນ.
20 ແຕ່ບໍ່ ໄດ້ ໃຫ້ ໄວ້ ວ່າ ຄົນໆ ໜຶ່ງ ຈະ
[ກ]ຄອບຄອງຫລາຍກວ່າອີກຄົນໜຶ່ງ, ດັ່ງນັ້ນ
[ຂ]ໂລກຈະຢູ່ໃນບາບ.
21 ແລະ ວິບັດຈົ່ງມີແກ່ຄົນທີ່ [ກ]ຫລັ່ງ
ເລືອດ ຫລື ເສຍເນື້ອໜັງໄປລ້າໆ ແລະ ບໍ່
ມີຄວາມຈຳເປັນ.
22 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ບຸດມະນຸດ
ບໍ່ໄດ້ [ກ]ສະເດັດມາໃນຮູບຮ່າງຂອງສະຕີ,
ທັງບໍ່ແມ່ນໃນຮູບຮ່າງຂອງຜູ້ຊາຍທີ່ສັນ
ຈອນໄປເທິງແຜ່ນດິນໂລກ.
23 ດັ່ງນັ້ນ, ຈົ່ງຢ່າຖືກ [ກ]ຫລອກ, ແຕ່ໃຫ້
ດຳເນີນຕໍ່ໄປໃນຄວາມແນ່ວແນ່, ໂດຍການ
[ຂ]ລໍຄອຍໃຫ້ຟ້າສະຫວັນສັ່ນສະເທືອນ,
ແລະ ແຜ່ນດິນໂລກສັ່ນ ແລະ ເນັ້ງໄປເບື້ອງ
ນັ້ນ ແລະ ເບື້ອງນີ້ເໝືອນດັ່ງຄົນເມົາເຫລົ້າ,
ແລະ ໃຫ້ [ຄ]ຮ່ອມພູຖືກຍົກຂຶ້ນສູງ, ແລະ ໃຫ້
[ງ]ພູຜາຖືກຫຍຸບລົງຕ່ຳ, ແລະ ໃຫ້ບ່ອນເປັນ
ຂຸມຄຸຄະກາຍເປັນບ່ອນຮາບພຽງ—ແລະ
ທັງໝົດນີ້ ເມື່ອທູດຈະເປົ່າ [ຈ]ແກຂອງເຂົາ.
24 ແຕ່ກ່ອນວັນອັນຍິ່ງໃຫຍ່ຂອງພຣະຜູ້
ເປັນເຈົ້າຈະມາເຖິງ, [ກ]ຢາໂຄບຈະ ຈະເລີນ
ຮຸ່ງເຮືອງຢູ່ໃນຖິ່ນແຫ້ງແລ້ງກັນດານ, ແລະ
ຊາວເລມັນຈະ [ຂ]ບານສະພັ່ງເໝືອນດັ່ງ
ດອກກຸຫລາບ.
25 ຊີໂອນຈະ [ກ]ຈະເລີນຮຸ່ງເຮືອງຢູ່ເທິງ
[ຂ]ເນີນພູ ແລະ ປິຕິຍິນດີຢູ່ເທິງພູເຂົາ, ແລະ
ຈະຖືກຮວບຮວມເຂົ້າກັນໃນບ່ອນທີ່ເຮົາໄດ້
ກຳນົດໄວ້.
26 ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ
ຈົ່ງອອກໄປດັ່ງທີ່ເຮົາໄດ້ບັນຊາພວກເຈົ້າ;
ຈົ່ງກັບໃຈຈາກບາບທັງໝົດຂອງພວກເຈົ້າ;
ຈົ່ງ [ກ]ໝັ່ນຂໍ ແລ້ວພວກເຈົ້າຈະໄດ້ຮັບ; ຈົ່ງ
ໝັ່ນເຄາະ ແລ້ວຈະມີຜູ້ໄຂປະຕູໃຫ້.
27 ຈົ່ງ ເບິ່ງ, ເຮົາ ຈະ ນຳໜ້າ ພວກ ເຈົ້າ
ແລະ ຈະຮັກສາ [ກ]ທາງຫລັງຂອງພວກເຈົ້າ;
ແລະ ເຮົາຈະຢູ່ [ຂ]ທ່າມກາງພວກເຈົ້າ, ແລະ
ພວກເຈົ້າຈະບໍ່ [ຄ]ສັບສົນ.
28 ຈົ່ງ ເບິ່ງ, ເຮົາ ຄື ພຣະ ເຢຊູ ຄຣິດ,
ແລະ ເຮົາມາ [ກ]ຢ່າງໄວ. ແມ່ນເປັນດັ່ງນັ້ນ.
ອາແມນ.

17 *ກ* ມຊ 3:4–5.
ຄມພ ສ້າງ, ການສ້າງ.
*ຂ* ຄມພ ຊີວິດກ່ອນເກີດ.
18 *ກ* ອສ ສັ່ງຫ້າມໃຫ້ລະເວັ້ນ.
*ຂ* ປຖກ 9:3; 1 ຕມທ 4:1–3.
19 *ກ* ຄພ 89:10–13.
20 *ກ* ກຈກ 4:32;
ຄພ 51:3; 70:14; 78:6.
*ຂ* ຄມພ ຄວາມເປັນ
ຢູ່ທາງໂລກ.
21 *ກ* ປຈສ ປຖກ 9:10–15
(ພາກທ້ອຍທ້າຍ).
22 *ກ* ຄມພ ການສະເດັດມາຄັ້ງທີ
ສອງຂອງພຣະເຢຊູຄຣິດ.
23 *ກ* ມທ 24:4–5.
*ຂ* 2 ປຕ 3:12; ຄພ 45:39.
*ຄ* ອຊຢ 40:4; ຄພ 109:74.
*ງ* ມກ 1:3–4.
*ຈ* ມທ 24:29–31.
24 *ກ* 3 ນຟ 5:21–26.
*ຂ* ອຊຢ 35:1;
2 ນຟ 30:5–6;
3 ນຟ 21:22–25;
ຄພ 3:20; 109:65.
25 *ກ* ຄພ 35:24.
*ຂ* ປຖກ 49:26;
2 ນຟ 12:2–3.
26 *ກ* ຄພ 88:63.
27 *ກ* ອຊຢ 52:12.
*ຂ* 3 ນຟ 20:22.
*ຄ* 1 ປຕ 2:6;
ຄພ 84:116.
28 *ກ* ຄພ 1:12.

# ພາກທີ 50

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 9 ເດືອນພຶດສະພາ, 1831. ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າແອວເດີບາງຄົນບໍ່ເຂົ້າໃຈການສະແດງໃຫ້ປະຈັກຂອງວິນຍານທີ່ແຕກຕ່າງກັນຢູ່ໃນແຜ່ນດິນໂລກ ແລະ ວ່າການເປີດເຜີຍນີ້ໄດ້ຖືກມອບໃຫ້ຕາມການທູນຖາມພິເສດຂອງເພິ່ນກ່ຽວກັບເລື່ອງນີ້. ສິ່ງທີ່ເອີ້ນກັນວ່າການແປກປະຫລາດທາງວິນຍານບໍ່ໄດ້ເປັນສິ່ງຜິດປົກກະຕິຢູ່ໃນບັນດາສະມາຊິກ, ຊຶ່ງບາງຄົນອ້າງວ່າໄດ້ຮັບພາບນິມິດ ແລະ ການເປີດເຜີຍ.*

*1–5, ມີວິນຍານເທັດຢ່າງຫລວງຫລາຍຢູ່ໃນແຜ່ນດິນໂລກ; 6–9, ວິບັດແກ່ຄົນໜ້າຊື່ໃຈຄົດ ແລະ ຄົນເຫລົ່ານັ້ນທີ່ຖືກຕັດອອກຈາກສາດສະໜາຈັກ; 10–14, ແອວເດີຕ້ອງສັ່ງສອນພຣະກິດຕິຄຸນໂດຍພຣະວິນຍານ; 15–22, ທັງຜູ້ສັ່ງສອນ ແລະ ຜູ້ຟັງຈຳເປັນຕ້ອງໄດ້ຮັບຄວາມສະຫວ່າງຈາກພຣະວິນຍານ; 23–25, ສິ່ງທີ່ບໍ່ເສີມສ້າງບໍ່ໄດ້ມາຈາກພຣະເຈົ້າ; 26–28, ຄົນຊື່ສັດເປັນຜູ້ຄອບຄອງທຸກສິ່ງທັງປວງ; 29–36, ຄຳອະທິຖານຂອງຄົນບໍລິສຸດໄດ້ຮັບຄຳຕອບ; 37–46, ພຣະຄຣິດເປັນຜູ້ລ້ຽງທີ່ດີ ແລະ ເປັນຫີນສີລາແຫ່ງອິດສະຣາເອນ.*

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າແອວເດີຂອງສາດສະໜາຈັກຂອງເຮົາ, ແລະ ງ່ຽງຫູຟັງສຽງຂອງພຣະເຈົ້າທີ່ຊົງພຣະຊົນຢູ່; ແລະ ເອົາໃຈໃສ່ຕໍ່ຄຳແຫ່ງປັນຍາ ຊຶ່ງຈະຖືກມອບໃຫ້ແກ່ພວກເຈົ້າ, ດັ່ງທີ່ພວກເຈົ້າໄດ້ທູນຖາມ ແລະ ເຫັນພ້ອມກັນກ່ຽວກັບສາດສະໜາຈັກ, ແລະ ວິນຍານຕ່າງໆຢູ່ໃນແຜ່ນດິນໂລກ.

2 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມີວິນຍານຢ່າງຫລວງຫລາຍທີ່ເປັນ *ກ*ວິນຍານເທັດ, ທີ່ໄດ້ອອກໄປໃນແຜ່ນດິນໂລກ, ຫລອກລວງໂລກ.

3 ແລະ *ກ*ຊາຕານກໍສະແຫວງຫາທີ່ຈະຫລອກລວງພວກເຈົ້າຄືກັນ, ເພື່ອວ່າມັນຈະໄດ້ເອົາຊະນະພວກເຈົ້າ.

4 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ຫລຽວເບິ່ງພວກເຈົ້າ, ແລະ ໄດ້ເຫັນຄວາມໜ້າກຽດຊັງໃນສາດສະໜາຈັກທີ່ *ກ*ອ້າງນາມຂອງເຮົາ.

5 ແຕ່ຄົນທີ່ຊື່ສັດ ແລະ *ກ*ອົດທົນຍ່ອມເປັນສຸກ, ບໍ່ວ່າໃນຊີວິດ ຫລື ໃນຄວາມຕາຍ, ເພາະວ່າເຂົາຈະໄດ້ຮັບຊີວິດນິລັນດອນເປັນມູນມໍລະດົກ.

6 ແຕ່ວິບັດແກ່ຄົນ *ກ*ຫລອກຫລວງ ແລະ ຄົນໜ້າຊື່ໃຈຄົດ, ເພາະ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຮົາຈະນຳເຂົາມາສູ່ການພິພາກສາ.

7 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມີຄົນ *ກ*ໜ້າຊື່ໃຈຄົດໃນບັນດາພວກເຈົ້າ, ຜູ້ໄດ້ຫລອກລວງບາງ

**50** 2*ກ* ຄພ 129. ຄມພ ວິນຍານ—ຜີມານຮ້າຍ.
3*ກ* ລກ 22:31; 3 ນຟ 18:18.
4*ກ* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
5*ກ* ຄມພ ອົດທົນ, ຄວາມອົດທົນ.
6*ກ* ຄມພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.
7*ກ* ມທ 23:13–15; ແອວ 34:28.

ຄົນ, ຊຶ່ງໄດ້ມອບ [ຂ]ອຳນາດໃຫ້ [ຄ]ສັດຕູ; ແຕ່ຈົ່ງເບິ່ງ ຄົນ [ງ]ເຊັ່ນນັ້ນຈະຕ້ອງຖືກນຳກັບຄືນມາ;

8 ແຕ່ຄົນໜ້າຊື່ໃຈຄົດຈະຖືກຊອກເຫັນ ແລະ ຖືກ [ກ]ຕັດອອກ, ໃນຊີວິດຫລືບໍ່ກໍໃນຄວາມຕາຍ, ແມ່ນແຕ່ ຕາມທີ່ເຮົາປະສົງ; ແລະ ວິບັດແກ່ພວກເຂົາຜູ້ຖືກຕັດອອກຈາກສາດສະໜາຈັກຂອງເຮົາ, ເພາະໂລກໄດ້ເອົາຊະນະຜູ້ຄົນເຫລົ່ານັ້ນແລ້ວ.

9 ດັ່ງນັ້ນ, ໃຫ້ມະນຸດທຸກຄົນລະວັງ ເພື່ອວ່າເຂົາຈະບໍ່ເຮັດສິ່ງທີ່ບໍ່ເປັນຄວາມຈິງ ແລະ ບໍ່ຊອບທຳຢູ່ຕໍ່ໜ້າເຮົາ.

10 ແລະ ບັດນີ້ມາເຖີດ, ພຣະຜູ້ເປັນເຈົ້າໄດ້ກ່າວ, ໂດຍພຣະວິນຍານ, ກັບແອວເດີແຫ່ງສາດສະໜາຈັກຂອງພຣະອົງ, ແລະ ໃຫ້ພວກເຮົາມາ [ກ]ເຈລະຈານຳກັນ, ເພື່ອວ່າພວກເຈົ້າຈະເຂົ້າໃຈ;

11 ໃຫ້ພວກເຮົາມາເຈລະຈານຳກັນ ແມ່ນແຕ່ຄືກັນກັບມະນຸດຄົນໜຶ່ງເຈລະຈາກັບມະນຸດອີກຄົນໜຶ່ງໜ້າຕໍ່ໜ້າ.

12 ບັດນີ້, ເມື່ອມະນຸດຄົນໜຶ່ງເຈລະຈາກັບມະນຸດອີກຄົນໜຶ່ງ ກໍໝາຍຄວາມວ່າ ເຂົາເຂົ້າໃຈມະນຸດ, ເພາະ ເຂົາເຈລະຈາດັ່ງມະນຸດ; ແມ່ນແຕ່ເຊັ່ນນັ້ນເຮົາ, ພຣະຜູ້ເປັນເຈົ້າ, ຈະເຈລະຈາກັບພວກເຈົ້າ ເພື່ອວ່າພວກເຈົ້າຈະ [ກ]ເຂົ້າໃຈ.

13 ດັ່ງນັ້ນ, ເຮົາພຣະຜູ້ເປັນເຈົ້າຖາມຄຳຖາມນີ້ກັບພວກເຈົ້າ—ພວກເຈົ້າໄດ້ຮັບ [ກ]ການແຕ່ງຕັ້ງເພື່ອສິ່ງໃດ?

14 ເພື່ອສັ່ງສອນພຣະກິດຕິຄຸນຂອງເຮົາໂດຍ [ກ]ພຣະວິນຍານ, ແມ່ນແຕ່ [ຂ]ພຣະຜູ້ປອບໂຍນ ຊຶ່ງຖືກສົ່ງອອກໄປເພື່ອສິດສອນຄວາມຈິງ.

15 ແລະ ຈາກນັ້ນພວກເຈົ້າໄດ້ຮັບເອົາ [ກ]ວິນຍານຕ່າງໆ ຊຶ່ງພວກເຈົ້າບໍ່ສາມາດເຂົ້າໃຈ, ແລະ ຮັບເອົາມັນວ່າ ມັນມາຈາກພຣະເຈົ້າ ແລະ ໃນການນີ້ພວກເຈົ້າເຮັດຖືກຕ້ອງແລ້ວບໍ?

16 ຈົ່ງເບິ່ງ ພວກເຈົ້າຈະຕ້ອງຕອບຄຳຖາມນີ້ດ້ວຍຕົນເອງ; ເຖິງຢ່າງໃດກໍຕາມ, ເຮົາຍັງຈະມີຄວາມເມດຕາຕໍ່ພວກເຈົ້າ; ຄົນທີ່ອ່ອນແອໃນບັນດາພວກເຈົ້າຈະຖືກເຮັດໃຫ້ [ກ]ເຂັ້ມແຂງຕໍ່ຈາກນີ້ໄປ.

17 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ຄົນທີ່ໄດ້ຮັບການແຕ່ງຕັ້ງຈາກເຮົາ ແລະ ຖືກສົ່ງອອກໄປ [ກ]ສັ່ງສອນພຣະຄຳແຫ່ງຄວາມຈິງໂດຍພຣະຜູ້ປອບໂຍນ, ໃນພຣະວິນຍານແຫ່ງຄວາມຈິງ, ເຂົາຈະສັ່ງສອນມັນໂດຍ [ຂ]ພຣະວິນຍານແຫ່ງຄວາມຈິງບໍ ຫລື ໂດຍທາງອື່ນ?

18 ແລະ ຖ້າຫາກເປັນໂດຍທາງອື່ນ ມັນກໍບໍ່ໄດ້ມາຈາກພຣະເຈົ້າ.

19 ແລະ ອີກເທື່ອໜຶ່ງ, ຄົນທີ່ໄດ້ຮັບພຣະຄຳແຫ່ງຄວາມຈິງ, ເຂົາໄດ້ຮັບມັນໂດຍພຣະວິນຍານແຫ່ງຄວາມຈິງບໍ ຫລື ໂດຍທາງອື່ນ?

20 ຖ້າຫາກເປັນໂດຍທາງອື່ນ ມັນກໍບໍ່ໄດ້ມາຈາກພຣະເຈົ້າ.

---

7 *ຂ* ມຊຢ 27:8–9.
*ຄ* ຄມພ ມານ.
*ງ* ອສ ຜູ້ທີ່ຖືກຫລອກລວງ.
8 *ກ* ຄພ 1:14; 56:3; 64:35.
ຄມພ ການຖືກໄລ່ອອກ.
10 *ກ* ອຊຢ 1:18;
ຄພ 45:10.
12 *ກ* ຄພ 1:24.
13 *ກ* ຄມພ ແຕ່ງຕັ້ງ,
ການແຕ່ງຕັ້ງ.
14 *ກ* ຄພ 43:15.
ຄມພ ສອນ, ຜູ້ສອນ,
ຄູສອນ—ການສອນ
ດ້ວຍພຣະວິນຍານ.
*ຂ* ຄມພ ພຣະຜູ້ປອບໂຍນ.
15 *ກ* ຄມພ ການສາມາດສັງ
ເກດ, ຂອງປະທານແຫ່ງ.
16 *ກ* ອຫ 12:23–27.
17 *ກ* ຄມພ ສັ່ງສອນ;
ວຽກງານເຜີຍແຜ່.
*ຂ* ຄພ 6:15.
ຄມພ ຈິງ, ຄວາມຈິງ;
ພຣະວິນຍານບໍລິສຸດ.

21 ສະນັ້ນ, ດ້ວຍເຫດໃດພວກເຈົ້າຈຶ່ງບໍ່
ສາມາດເຂົ້າໃຈ ແລະ ຮູ້ຈັກ, ວ່າຄົນທີ່ໄດ້
ຮັບພຣະຄຳໂດຍພຣະວິນຍານແຫ່ງຄວາມ
ຈິງ ໄດ້ຮັບມັນດັ່ງທີ່ສັ່ງສອນໄວ້ໂດຍພຣະ
ວິນຍານແຫ່ງຄວາມຈິງ?

22 ດັ່ງນັ້ນ, ຄົນທີ່ສັ່ງສອນ ແລະ ຄົນທີ່
ໄດ້ຮັບຈະເຂົ້າໃຈກັນ, ແລະ ທັງສອງໄດ້ຮັບ
[ກ]ການເສີມສ້າງ ແລະ [ຂ]ປິຕິຍິນດີນຳກັນ.

23 ແລະ ສິ່ງທີ່ບໍ່ເສີມສ້າງ ບໍ່ໄດ້ມາຈາກ
ພຣະເຈົ້າ, ແລະ ເປັນ [ກ]ຄວາມມືດ.

24 ສິ່ງທີ່ມາຈາກພຣະເຈົ້າເປັນ [ກ]ຄວາມ
ສະຫວ່າງ; ແລະ ຄົນທີ່ໄດ້ຮັບຄວາມສະ
ຫວ່າງ, ແລະ [ຂ]ດຳເນີນຢູ່ກັບພຣະເຈົ້າ, ຈະ
ໄດ້ຮັບ [ຄ]ຄວາມສະຫວ່າງຫລາຍຂຶ້ນ; ແລະ
ຄວາມສະຫວ່າງນັ້ນຈະຮຸ່ງແຈ້ງຫລາຍຂຶ້ນ
ໄປເລື້ອຍໆຈົນເຖິງວັນທີ່ສົມບູນ.

25 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າ ແລະ ເຮົາ
ກ່າວມັນເພື່ອວ່າພວກເຈົ້າຈະຮູ້ [ກ]ຄວາມ
ຈິງ, ເພື່ອວ່າພວກເຈົ້າຈະໄດ້ຂັບໄລ່ຄວາມ
ມືດອອກໄປຈາກບັນດາພວກເຈົ້າ;

26 ຄົນໃດທີ່ໄດ້ຮັບການແຕ່ງຕັ້ງຈາກ
ພຣະເຈົ້າ ແລະ ຖືກສົ່ງອອກໄປ, ຄົນໆນັ້ນ
ໄດ້ຖືກກຳນົດໃຫ້ເປັນ [ກ]ຜູ້ຍິ່ງໃຫຍ່ທີ່ສຸດ,
ເຖິງແມ່ນເຂົາຈະຕ່ຳຕ້ອຍທີ່ສຸດ ແລະ ເປັນ
[ຂ]ຄົນຮັບໃຊ້ຜູ້ຄົນທັງປວງ.

27 ດັ່ງນັ້ນ, ເຂົາຈຶ່ງເປັນ [ກ]ຜູ້ຄອບຄອງ
ທຸກສິ່ງທັງປວງ; ເພາະທຸກສິ່ງທັງປວງຂຶ້ນຢູ່
ກັບເຂົາ, ທັງໃນສະຫວັນ ແລະ ເທິງແຜ່ນ
ດິນໂລກ, ຊີວິດ ແລະ ຄວາມສະຫວ່າງ,
ພຣະວິນຍານ ແລະ [ຂ]ອຳນາດ, ໄດ້ຖືກສົ່ງ
ອອກໄປໂດຍພຣະປະສົງຂອງພຣະບິດາ
ຜ່ານພຣະເຢຊູຄຣິດ, ພຣະບຸດຂອງພຣະ
ອົງ.

28 ແຕ່ບໍ່ມີຄົນໃດເປັນຜູ້ຄອບຄອງທຸກ
ສິ່ງທັງປວງ ຍົກເວັ້ນແຕ່ເຂົາຈະຖືກ [ກ]ເຮັດ
ໃຫ້ບໍລິສຸດ ແລະ [ຂ]ຊຳລະລ້າງຈາກບາບທັງ
ໝົດເສຍກ່ອນ.

29 ແລະ ຖ້າຫາກພວກເຈົ້າຖືກເຮັດໃຫ້
ບໍລິສຸດ ແລະ ຊຳລະລ້າງຈາກບາບທັງໝົດ
ແລ້ວ, ພວກເຈົ້າຈະ [ກ]ທູນຂໍສິ່ງໃດກໍຕາມທີ່
ພວກເຈົ້າປາດຖະໜາໃນພຣະນາມຂອງ
ພຣະເຢຊູ ແລ້ວສິ່ງນັ້ນກໍຈະເກີດຂຶ້ນ.

30 ແຕ່ຈົ່ງຮູ້ໄວ້ວ່າ ສິ່ງທີ່ພວກເຈົ້າທູນຂໍ
ຈະຖືກມອບໃຫ້ແກ່ພວກເຈົ້າ; ແລະ ເພາະ
ພວກເຈົ້າຖືກກຳນົດໃຫ້ [ກ]ເປັນຫົວໜ້າ, ວິນ
ຍານທັງຫລາຍຈະຂຶ້ນຢູ່ກັບພວກເຈົ້າ.

31 ດັ່ງນັ້ນ, ເຫດການຈະບັງເກີດຂຶ້ນຄື
ຖ້າຫາກພວກເຈົ້າເຫັນ [ກ]ວິນຍານສະແດງ
ໃຫ້ປະຈັກສິ່ງທີ່ພວກເຈົ້າບໍ່ສາມາດເຂົ້າໃຈ,
ແລະ ພວກເຈົ້າບໍ່ໄດ້ຮັບເອົາວິນຍານນັ້ນ,
ໃຫ້ພວກເຈົ້າທູນຂໍຈາກພຣະບິດາໃນພຣະ
ນາມຂອງພຣະເຢຊູ; ແລະ ຖ້າຫາກພຣະ
ອົງບໍ່ໄດ້ມອບວິນຍານນັ້ນໃຫ້ພວກເຈົ້າ,

---

22 *ກ* 1 ກຣທ 14:26.
*ຂ* ຢຣ 4:36.
23 *ກ* ຄມພ ຄວາມມືດທາງວິນຍານ.
24 *ກ* 1 ຢຣ 2:8–11; ມຣນ 7:14–19; ຄພ 84:45–47; 88:49. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ຢຣ 15:4–5, 10.
*ຄ* 2 ນຟ 28:30.
25 *ກ* ຢຣ 8:32.
26 *ກ* ມທ 23:11.
*ຂ* ມຣກ 10:42–45. ຄມພ ຮັບໃຊ້, ການຮັບໃຊ້.
27 *ກ* ຄພ 76:5–10, 53–60; 84:34–41.
*ຂ* ຄມພ ອຳນາດ.
28 *ກ* 3 ນຟ 19:28–29; ຄພ 88:74–75. ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ; ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຂ* 1 ຢຣ 1:7–9.
29 *ກ* ຣລມ 10:5; ຄພ 46:30. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
30 *ກ* ຄມພ ສິດອຳນາດ.
31 *ກ* 1 ຢຣ 4:1. ຄມພ ວິນຍານ—ຜີມານຮ້າຍ.

ເມື່ອນັ້ນພວກເຈົ້າຈະຮູ້ວ່າ ມັນບໍ່ໄດ້ມາຈາກ
ພຣະເຈົ້າ.

32 ແລະ ມັນ ຈະ ຖືກ ມອບ ໃຫ້ ແກ່ ພວກ
ເຈົ້າ, [ກ]ອຳນາດ ເໜືອ ວິນ ຍານ ນັ້ນ; ແ ລະ
ພວກເຈົ້າຈະປະກາດຕໍ່ຕ້ານວິນຍານນັ້ນ
ດ້ວຍສຽງອັນດັງວ່າມັນບໍ່ໄດ້ມາຈາກພຣະ
ເຈົ້າ—

33 ບໍ່ແມ່ນໂດຍການກ່າວຫາທີ່ [ກ]ຕໍ່ວ່າ,
ເພື່ອວ່າພວກເຈົ້າຈະບໍ່ໃຫ້ມັນເອົາຊະນະ,
ທັງບໍ່ແມ່ນດ້ວຍການກ່າວ [ຂ]ອວດອ້າງ ຫລື
ດ້ວຍຄວາມປິຕິຍິນດີ, ຖ້າບໍ່ດັ່ງນັ້ນພວກ
ເຈົ້າຈະຖືກມັນຍຶດໄວ້.

34 ຄົນທີ່ໄດ້ຮັບຈາກພຣະເຈົ້າ, ກໍໃຫ້ເຂົາ
ພິຈາລະນາວ່າມັນມາຈາກພຣະເຈົ້າ; ແລະ
ໃຫ້ເຂົາປິຕິຍິນດີທີ່ເຂົາໄດ້ຮັບການພິຈາລະ
ນາຈາກພຣະເຈົ້າວ່າ ເຂົາມີຄ່າຄວນທີ່ຈະ
ໄດ້ຮັບມັນ.

35 ແລະ ໂດຍ ການ ເອົາ ໃຈ ໃສ່ ແລະ
ການເຮັດຕາມສິ່ງເຫລົ່ານີ້ຊຶ່ງພວກເຈົ້າໄດ້
ຮັບ, ແລະ ຊຶ່ງພວກເຈົ້າຈະໄດ້ຮັບຫລັງຈາກ
ນີ້—ແລະ [ກ]ອານາຈັກທີ່ພຣະບິດາມອບໃຫ້
ແກ່ພວກເຈົ້າ, ແລະ [ຂ]ອຳນາດທີ່ຈະເອົາ
ຊະນະ ທຸກສິ່ງທັງປວງ ຊຶ່ງບໍ່ໄດ້ຮັບການ
ແຕ່ງຕັ້ງຈາກພຣະອົງ—

36 ແ ລະ ຈົ່ງເບິ່ງ, ຕາມຄວາມຈິງແລ້ວ
ເຮົາກ່າວກັບພວກເຈົ້າວ່າ ພວກເຈົ້າເປັນ
ສຸກແລ້ວ ຜູ້ບັດນີ້ໄດ້ຍິນຖ້ອຍຄຳຂອງເຮົາ
ຈາກປາກຂອງຜູ້ຮັບໃຊ້ຂອງເຮົາ, ເພາະ
ບາບຂອງພວກເຈົ້າໄດ້ຖືກ [ກ]ອະໄພໃຫ້
ແລ້ວ.

37 ຈົ່ງ ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ ໂຈເຊັບ
ເວກຟຽວ, ຜູ້ຊຶ່ງເຮົາພໍໃຈຫລາຍ, ແລະ ຜູ້
ຮັບໃຊ້ຂອງເຮົາ [ກ]ພາລີ ພີ ພະແຣັດ ອອກ
ໄປຫາໜ່ວຍຂອງສາດສະໜາຈັກ ແລະ
ເພີ່ມຄວາມເຂັ້ມແຂງໃຫ້ພວກເຂົາໂດຍ
ການໃຫ້ຖ້ອຍຄຳແຫ່ງ [ຂ]ການແນະນຳ;

38 ແລະ ຜູ້ຮັບໃຊ້ຂອງເຮົາ ຈອນ ຄໍຣຽວ
ນຳອີກ, ຫລື ຫລາຍຕໍ່ຫລາຍຄົນຂອງຜູ້ຮັບ
ໃຊ້ຂອງເຮົາທີ່ໄດ້ຮັບການແຕ່ງຕັ້ງສູ່ໜ້າທີ່
ນີ້, ແລະ ໃຫ້ພວກເຂົາທຳງານໃນ [ກ]ສວນ
ອະງຸ່ນ; ແລະ ບໍ່ໃຫ້ຄົນໃດຂັດຂວາງພວກ
ເຂົາໃນການເຮັດສິ່ງນັ້ນ ຊຶ່ງເຮົາໄດ້ກຳນົດ
ພວກເຂົາ—

39 ດັ່ງນັ້ນ, ໃນເລື່ອງນີ້ຜູ້ຮັບໃຊ້ຂອງເຮົາ
[ກ]ເອດເວີດ ພາດທຣິດ ບໍ່ຖືກຕ້ອງ; ເຖິງຢ່າງ
ໃດກໍຕາມ ໃຫ້ລາວກັບໃຈ ແລະ ລາວຈະ
ໄດ້ຮັບການໃຫ້ອະໄພ.

40 ຈົ່ງ ເບິ່ງ, ພວກ ເຈົ້າ ເປັນ ເດັກ ນ້ອຍໆ
ແລະ ພວກ ເຈົ້າບໍ່ [ກ]ສາມາດ ອົດທົນກັບ
ທຸກສິ່ງທັງປວງໃນຕອນນີ້; ພວກເຈົ້າຕ້ອງ
[ຂ]ເຕີບໂຕຂຶ້ນໃນ [ຄ]ພຣະຄຸນ ແລະ ໃນຄວາມ
ຮູ້ເລື່ອງ [ງ]ຄວາມຈິງ.

41 [ກ]ຢ່າສູ້ຢ້ານ, [ຂ]ເດັກນ້ອຍເອີຍ, ເພາະ
ພວກ ເຈົ້າ ເປັນຂອງເຮົາ, ແລະ ເຮົາໄດ້
[ຄ]ເອົາຊະນະໂລກແລ້ວ, ແລະ ພວກເຈົ້າ
ເປັນຜູ້ທີ່ພຣະບິດາໄດ້ [ງ]ມອບໃຫ້ແກ່ເຮົາ;

---

32 *ກ* ມທ 10:1.
33 *ກ* ຢດ 1:9.
*ຂ* ຄພ 84:67, 73.
35 *ກ* ຄມພ ອານາຈັກຂອງ ພຣະເຈົ້າ ຫລື ອານາຈັກສະຫວັນ.
*ຂ* 1 ຢຮ 4:4; ຄພ 63:20, 47.
36 *ກ* ຄພ 58:42–43. ຄມພ ອະໄພ, ໃຫ້ອະໄພ.
37 *ກ* ຄມພ ພະແຣັດ, ພາລີ ພາກເກີ.
*ຂ* ຄພ 97:3–5.
38 *ກ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
39 *ກ* ຄມພ ພາດທຣິດ, ເອດເວີດ.
40 *ກ* 3 ນຟ 17:2–3; ຄພ 78:17–18.
*ຂ* 1 ກຣທ 3:2–3; ຄພ 19:22–23.
*ຄ* ຄມພ ພຣະຄຸນ.
*ງ* ຄມພ ຈິງ, ຄວາມຈິງ.
41 *ກ* 1 ຢຮ 4:18.
*ຂ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
*ຄ* ຢຮ 16:33.
*ງ* ຢຮ 10:27–29; 17:2; 3 ນຟ 15:24; ຄພ 27:14; 84:63.

42 ແລະ ບໍ່ມີຄົນໃດທີ່ພຣະບິດາໄດ້ມອບ
ໃຫ້ແກ່ເຮົາຈະ [ກ]ເສຍໄປ.
43 ແລະ ພຣະ ບິດາ ກັບ ເຮົາ ເປັນ ອັນ
[ກ]ໜຶ່ງດຽວກັນ. ເຮົາຢູ່ໃນພຣະບິດາ ແລະ
ພຣະບິດາຢູ່ໃນເຮົາ; ແລະ ຕາບໃດທີ່ພວກ
ເຈົ້າໄດ້ຮັບເອົາເຮົາ, ພວກເຈົ້າກໍຢູ່ໃນເຮົາ
ແລະ ເຮົາກໍຢູ່ໃນພວກເຈົ້າ.
44 ດັ່ງນັ້ນ, ເຮົາຢູ່ໃນທ່າມກາງພວກເຈົ້າ,
ແລະ ເຮົາເປັນຜູ້ລ້ຽງ [ກ]ທີ່ດີ, ແລະ [ຂ]ຫີນສີ
ລາແຫ່ງອິດສະຣາເອນ. ຄົນທີ່ສ້າງຢູ່ເທິງ
[ຄ]ຫີນສີລານີ້ຈະ [ງ]ບໍ່ຕົກ.
45 ແລະ ວັນ ນັ້ນ ຈະ ມາ ເຖິງ ເມື່ອ ພວກ
ເຈົ້າຈະໄດ້ຍິນສຽງຂອງເຮົາ ແລະ [ກ]ເຫັນ
ເຮົາ, ແລະ ຮູ້ວ່າເຮົາເປັນຢູ່.
46 ສະນັ້ນຈົ່ງ [ກ]ເຝົ້າຄອຍ, ເພື່ອວ່າພວກ
ເຈົ້າຈະ [ຂ]ຕຽມພ້ອມ. ແມ່ນ ເປັນດັ່ງນັ້ນ.
ອາແມນ.

---

# ພາກທີ 51

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງທອມສັນ, ລັດໂອໄຮໂອ, ວັນທີ 20 ເດືອນພຶດສະພາ, 1831. ໃນເວລານີ້ໄພ່ພົນຂອງພຣະເຈົ້າທີ່ອົບພະຍົບມາຈາກລັດຕ່າງໆທາງຕາເວັນອອກໄດ້ເລີ່ມຕົ້ນມາເຖິງລັດໂອໄຮໂອ, ແລະ ຈຳເປັນຕ້ອງມີການຈັດຕຽມຢ່າງຄັກແນ່ສຳລັບການມາຕັ້ງຖິ່ນຖານຂອງພວກເຂົາ. ໃນເມື່ອວຽກງານນີ້ເປັນໜ້າທີ່ຂອງອະທິການໂດຍສະເພາະ, ອະທິການເອດເວີດ ພາດທຣິດ ຈຶ່ງໄດ້ສະແຫວງຫາຄຳແນະນຳກ່ຽວກັບເລື່ອງນີ້, ແລະ ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າ.*

*1–8, ເອດເວີດ ພາດທຣິດ ໄດ້ຖືກກຳນົດໃຫ້ຄວບຄຸມສິ່ງທີ່ຢູ່ໃນການພິທັກຮັກສາ ແລະ ຊັບສິນຕ່າງໆ; 9–12, ໄພ່ພົນຂອງພຣະເຈົ້າຕ້ອງປະຕິບັດຕໍ່ກັນດ້ວຍຄວາມຊື່ສັດ ແລະ ໄດ້ຮັບຢ່າງເທົ່າທຽມກັນ; 13–15, ພວກເຂົາຕ້ອງມີຄັງຂອງອະທິການ ແລະ ຈັດການກັບຊັບສິນຕ່າງໆຕາມກົດຂອງພຣະຜູ້ເປັນເຈົ້າ; 16–20, ລັດໂອໄຮໂອຈະເປັນສະຖານທີ່ເຕົ້າໂຮມຊົ່ວຄາວ.*

1 ຈົ່ງ ເຊື່ອ ຟັງ ເຮົາ, ພຣະ ຜູ້ ເປັນ ເຈົ້າ ອົງ
ເປັນພຣະເຈົ້າຂອງເຈົ້າໄດ້ກ່າວ, ແລະ ເຮົາ
ຈະກ່າວກັບຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ
ພາດ ທຣິດ, ແລະ ໃຫ້ ຄຳ ແນະນຳ ແກ່
ລາວ; ເພາະ ຈຳ ເປັນ ທີ່ ລາວ ຕ້ອງ ໄດ້ຮັບ
ຄຳແນະນຳ ເຖິງວິທີຈັດວາງລະບຽບຜູ້ຄົນ
ເຫລົ່ານີ້.
2 ເພາະ ຈຳ ເປັນ ທີ່ ຈະ ຈັດ ວາງ ລະບຽບ
ພວກເຂົາຕາມ [ກ]ກົດຂອງເຮົາ; ຖ້າບໍ່ດັ່ງນັ້ນ,
ພວກເຂົາຈະຖືກຕັດອອກ.

---

42 *ກ* ຢຮ 17:12;
3 ນຟ 27:30–31.
43 *ກ* ຢຮ 17:20–23;
3 ນຟ 11:35–36.
ຄມພ ພຣະເຈົ້າ,
ຝ່າຍພຣະເຈົ້າ.
44 *ກ* ຢຮ 10:14–15.
ຄມພ ຜູ້ລ້ຽງທີ່ດີ.
*ຂ* ປຖກ 49:24; 1 ປຕ 2:4–8.
ຄມພ ຫີນເສົາເອກ.
*ຄ* 1 ກຣທ 10:1–4.
ຄມພ ພຣະເຢຊູຄຣິດ;
ຫີນ.
*ງ* ຮລມ 5:12.
45 *ກ* ຄພ 67:10–13.
46 *ກ* ຄມພ ຍາມ, ຄົນຍາມ.
*ຂ* ແອວ 34:32–33.
**51** 1 *ກ* ຄມພ ພາດທຣິດ,
ເອດເວີດ.
2 *ກ* ຄພ 42:30–39; 105:5.
ຄມພ ອຸທິດຖວາຍ, ກົດ
ແຫ່ງການອຸທິດຖວາຍ.

3 ດັ່ງນັ້ນ, ໃຫ້ຜູ້ຮັບໃຊ້ຂອງເຮົາ ເອດເວີດ
ພາດທຣິດ, ແລະ ຄົນເຫລົ່ານັ້ນຜູ້ຊຶ່ງລາວ
ໄດ້ເລືອກໄວ້, ຜູ້ຊຶ່ງ ເຮົາພໍໃຈຫລາຍ, ກໍາ
ນົດຊັບສິນທີ່ເປັນສ່ວນຂອງເຂົາໃຫ້ຜູ້ຄົນ
ເຫລົ່ານັ້ນ, ທຸກຄົນ [ກ]ເທົ່າກັນຕາມຄອບ
ຄົວຂອງເຂົາ, ຕາມສະພາບການຂອງເຂົາ
ແລະ ຕາມຄວາມຕ້ອງການ ແລະ [ຂ]ຄວາມ
ຈໍາເປັນຂອງເຂົາ.
4 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ເອດເວີດ
ພາດທຣິດ, ເມື່ອລາວຈະກໍານົດຊັບສິນໃຫ້
ຄົນໃດ, ໃຫ້ລາວມອບ ລາຍລັກອັກສອນ
ໃຫ້ເຂົາ ເພື່ອເປັນສິ່ງປະກັນສ່ວນຂອງເຂົາ,
ເພື່ອເຂົາຈະຖືໄວ້, ແມ່ນແຕ່ສິດນີ້ ແລະ ມໍ
ລະດົກໃນສາດສະໜາຈັກ, ຈົນກວ່າເຂົາ
ລ່ວງລະເມີດ ແລະ ນັບວ່າບໍ່ມີຄ່າຄວນໂດຍ
ສຽງຂອງສາດສະໜາຈັກ, ຕາມກົດ ແລະ
[ກ]ພັນທະສັນຍາຂອງສາດສະໜາຈັກ, ທີ່ຈະ
ເປັນຂອງສາດສະໜາຈັກ.
5 ແລະ ຖ້າຫາກເຂົາລ່ວງລະເມີດ ແລະ
ນັບວ່າບໍ່ມີຄ່າຄວນທີ່ຈະເປັນຂອງສາດສະ
ໜາຈັກ, ເຂົາຈະບໍ່ມີສິດທີ່ຈະທວງເອົາຊັບ
ສິນສ່ວນນັ້ນ ຊຶ່ງເຂົາໄດ້ອຸທິດໃຫ້ແກ່ອະທິ
ການສໍາລັບຄົນຍາກຈົນ ແລະ ຄົນຂັດສົນ
ໃນສາດສະໜາຈັກຂອງເຮົາ; ສະນັ້ນ, ເຂົາ
ຈະບໍ່ມີຂອງປະທານນັ້ນອີກຕໍ່ໄປ, ແຕ່ຈະມີ
ພຽງແຕ່ສ່ວນທີ່ໂອນໃຫ້ເຂົາເປັນເຈົ້າຂອງ
ເທົ່ານັ້ນ.
6 ແລະ ຈະຕ້ອງເຮັດທຸກສິ່ງທຸກຢ່າງໃຫ້
ຖືກຕ້ອງ ດັ່ງນັ້ນ, [ກ]ຕາມ [ຂ]ກົດໝາຍຂອງ
ແຜ່ນດິນ.
7 ແລະ ໃຫ້ກໍານົດສິ່ງທີ່ເປັນຂອງຜູ້ຄົນ
ເຫລົ່ານີ້ໄວ້ກັບຜູ້ຄົນເຫລົ່ານີ້.
8 ແລະ [ກ]ເງິນທີ່ ເຫລືອຢູ່ໄວ້ໃຫ້ຜູ້ຄົນ
ເຫລົ່ານີ້—ໃຫ້ກໍານົດຕົວແທນໃຫ້ແກ່ຜູ້ຄົນ
ເຫລົ່ານີ້, ທີ່ຈະນໍາ [ຂ]ເງິນໄປຈັດຫາອາຫານ
ແລະ ເຄື່ອງນຸ່ງຫົ່ມ, ຕາມຄວາມຕ້ອງການ
ຂອງຜູ້ຄົນເຫລົ່ານີ້.
9 ແລະ ໃຫ້ທຸກຄົນປະຕິບັດຕໍ່ກັນ [ກ]ຢ່າງ
ຊື່ສັດ, ແລະ ເທົ່າທຽມກັນໃນບັນດາຜູ້ຄົນ
ເຫລົ່ານີ້, ແລະ ໄດ້ຮັບເທົ່າທຽມກັນ, ເພື່ອ
ວ່າພວກເຈົ້າຈະໄດ້ເປັນອັນ [ຂ]ໜຶ່ງດຽວກັນ,
ແມ່ນແຕ່ຕາມທີ່ເຮົາໄດ້ບັນຊາພວກເຈົ້າ.
10 ແລະ ຢ່າໃຫ້ສິ່ງທີ່ເປັນຂອງຜູ້ຄົນ
ເຫລົ່ານີ້ຖືກເອົາໄປ ແລະ ມອບໃຫ້ບາງຄົນ
ໃນ [ກ]ໜ່ວຍອື່ນຂອງສາດສະໜາຈັກ.
11 ດັ່ງນັ້ນ, ຖ້າຫາກໜ່ວຍອື່ນຂອງສາດ
ສະໜາຈັກຢາກໄດ້ເງິນຈາກສາດສະໜາ
ຈັກໜ່ວຍນີ້, ກໍໃຫ້ເຂົາຈ່າຍຄືນໃຫ້ສາດສະ
ໜາຈັກໜ່ວຍນີ້ ຕາມທີ່ພວກເຂົາໄດ້ຕົກລົງ
ກັນ;
12 ແລະ ການນີ້ຈະດໍາເນີນໄປໂດຍຜ່ານ
ອະທິການ ຫລື ຜູ້ເປັນຕົວແທນ, ຊຶ່ງຈະຖືກ
ກໍານົດໂດຍ [ກ]ສຽງຂອງໜ່ວຍຂອງສາດສະ
ໜາຈັກ.
13 ແລະ ອີກເທື່ອໜຶ່ງ, ໃຫ້ອະທິການ
ກໍານົດ [ກ]ຄັງແຫ່ງໜຶ່ງໃຫ້ແກ່ສາດສະໜາ
ຈັກໜ່ວຍນີ້; ແລະ ໃຫ້ທຸກສິ່ງທັງເງິນຄໍາ
ແລະ ອາຫານການກິນ, ຊຶ່ງມີຫລາຍກວ່າ

3 *ກ* ຄພ 49:20.
*ຂ* ກຈກ 2:44–45; 4 ນຟ 1:2–3.
4 *ກ* ອສ ພາກທີ 20 ຖືກເອີ້ນວ່າ ກົດ ແລະ ພັນທະສັນຍາ ຂອງສາດສະໜາຈັກຂອງ ພຣະຄຣິດ. ຄພ 33:14; 42:13. ຄມພ ພັນທະສັນຍາ.
6 *ກ* 1 ປຕ 2:13; ຄພ 98:5–7.
*ຂ* ຄພ 58:21–22.
8 *ກ* ຄພ 84:104.
*ຂ* ຄພ 104:15–18.
9 *ກ* ຄມພ ຊື່ສັດ, ຄວາມຊື່ສັດ.
*ຂ* ຄພ 38:27. ຄມພ ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.
10 *ກ* ອສ ສາຂາອື່ນຂອງ ສາດສະໜາຈັກ, ບໍ່ ແມ່ນນິກາຍອື່ນ.
12 *ກ* ຄມພ ເຫັນຊອບນໍາກັນ.
13 *ກ* ຄພ 42:55. ຄມພ ຄັງ.

ຂ ຄວາມຕ້ອງການຂອງຜູ້ຄົນເຫລົ່ານີ້ ຖືກ
ເກັບໄວ້ໃນມືຂອງອະທິການ.
14 ແລະ ໃຫ້ລາວ ເກັບຈຳນວນທີ່ລາວ
ຕ້ອງການໄວ້ໃຫ້ຕົນນຳອີກ, ແລະ ສຳລັບ
ຄວາມຕ້ອງການຂອງຄອບຄົວຂອງລາວ,
ໃນຂະນະທີ່ລາວຖືກຈ້າງໃຫ້ມາເຮັດທຸລະ
ກິດນີ້.
15 ແລະ ດັ່ງນັ້ນເຮົາຈຶ່ງມອບສິດທິພິເສດ
ໃຫ້ແກ່ຜູ້ຄົນເຫລົ່ານີ້ ທີ່ຈະຈັດວາງລະບຽບ
ຕົນຕາມ ກກົດຂອງເຮົາ.
16 ແລະ ເຮົາອຸທິດ ກທີ່ດິນນີ້ໄວ້ໃຫ້ພວກ
ເຂົາຊົ່ວໄລຍະໜຶ່ງ, ຈົນກວ່າເຮົາ, ພຣະຜູ້
ເປັນເຈົ້າ, ຈະຈັດຫາບ່ອນອື່ນໃຫ້ພວກເຂົາ,
ແລະ ບັນຊາພວກເຂົາໃຫ້ໄປຈາກບ່ອນນີ້;
17 ແລະ ຊົ່ວໂມງ ແລະ ວັນ ຈະບໍ່ບອກ
ໃຫ້ພວກເຂົາຮູ້, ດັ່ງນັ້ນ ໃຫ້ພວກເຂົາດຳ
ລົງຊີວິດໃນແຜ່ນດິນນີ້ ປະມານຫລາຍປີ,
ແລະ ການນີ້ຈະກັບເປັນຜົນດີໃຫ້ແກ່ພວກ
ເຂົາ.
18 ຈົ່ງເບິ່ງ, ນີ້ຈະເປັນ ກຕົວຢ່າງໃຫ້ແກ່ຜູ້
ຮັບໃຊ້ຂອງເຮົາ ເອດເວີດ ພາດທຣິດ, ໃນ
ສະຖານທີ່ອື່ນໆ, ໃນທຸກໜ່ວຍຂອງສາດ
ສະໜາຈັກ.
19 ແລະ ຜູ້ໃດທີ່ຖືກພົບວ່າຊື່ສັດ, ທ່ຽງ
ທຳ, ແລະ ເປັນ ກຜູ້ພິທັກຮັກສາທີ່ສະຫລາດ
ຈະມີ ຂຄວາມຊົມຊື່ນກັບພຣະຜູ້ເປັນເຈົ້າ,
ແລະ ຈະໄດ້ຮັບຊີວິດນິລັນດອນເປັນມູນມໍ
ລະດົກ.
20 ຕາມຄວາມຈິງແລ້ວ, ເຮົາກ່າວກັບ
ເຈົ້າວ່າ ເຮົາຄືພຣະເຢຊູຄຣິດ, ຜູ້ມາ ກຢ່າງ
ໄວ, ໃນ ຂຊົ່ວໂມງທີ່ເຈົ້າບໍ່ຄາດຄິດ. ແມ່ນ
ເປັນດັ່ງນັ້ນ. ອາແມນ.

## ພາກທີ 52

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ພວກແອວເດີຂອງ ສາດສະໜາຈັກ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 6 ເດືອນມິຖຸນາ, 1831. ກອງ ປະຊຸມໃຫຍ່ໄດ້ຖືກຈັດຂຶ້ນທີ່ເມືອງເຄີດແລນ, ເລີ່ມຕົ້ນໃນວັນທີ 3 ແລະ ສິ້ນສຸດລົງໃນວັນທີ 6 ຂອງເດືອນມິຖຸນາ. ໃນກອງປະຊຸມໃຫຍ່ນີ້ ມີການແຕ່ງຕັ້ງສະເພາະເປັນເທື່ອທຳອິດຕໍ່ຕຳ ແໜ່ງມະຫາປະໂລຫິດ, ແລະ ມີການຫລົງເຫັນ ແລະ ຕິຕຽນການສະແດງໃຫ້ປະຈັກບາງ ຢ່າງຂອງວິນຍານເທັດ ແລະ ການຫລອກລວງ.*

*1–2, ກອງປະຊຸມໃຫຍ່ຄັ້ງຕໍ່ໄປຖືກກຳນົດ ໃຫ້ຈັດຂຶ້ນໃນລັດມີເຊີຣີ; 3–8, ມີການກຳ ນົດແອວເດີບາງຄົນໃຫ້ເດີນທາງໄປນຳ ກັນ; 9–11, ແອວເດີຕ້ອງສິດສອນສິ່ງທີ່ ອັກຄະສາວົກ ແລະ ສາດສະດາໄດ້ຂຽນ ໄວ້; 12–21, ຄົນທີ່ໄດ້ຮັບຄວາມສະຫວ່າງ ໂດຍພຣະວິນຍານຈະນຳຜົນແຫ່ງການສັນ ລະເສີນ ແລະ ປັນຍາອອກມາ; 22–44, ແອວເດີບາງຄົນໄດ້ຖືກກຳນົດໃຫ້ອອກໄປ ສັ່ງສອນພຣະກິດຕິຄຸນໃນຂະນະທີ່ເດີນ*

13 ຂ ຄພ 42:33–34, 55; 82:17–19.
15 ກ ຄພ 51:2.
16 ກ ອສ ເຂດເຄີດແລນ, ລັດໂອໄຮໂອ.
18 ກ ອສ ແບບແຜນ.
19 ກ ມທ 24:45–47. ຄມພ ພິທັກຮັກສາ, ຜູ້ພິທັກ ຮັກສາ, ການພິທັກຮັກສາ.
ຂ ຄມພ ຊື່ນຊົມ, ຄວາມຊື່ນຊົມ.
20 ກ ພນມ 22:6–16.
ຂ ມທ 24:44.

*ທາງ ໄປ ລັດມີເຊີຣີເພື່ອຮ່ວມກອງປະຊຸມ ໃຫຍ່.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງ
ນີ້ກັບແອວເດີຜູ້ທີ່ພຣະອົງໄດ້ [ກ]ເອີ້ນ ແລະ
ໄດ້ເລືອກໃນຍຸກສຸດທ້າຍນີ້, ໂດຍສຸລະສຽງ
ແຫ່ງພຣະວິນຍານຂອງພຣະອົງ—
2 ໂດຍກ່າວວ່າ: ເຮົາ, ພຣະຜູ້ເປັນເຈົ້າ,
ຈະເຮັດໃຫ້ເປັນທີ່ຮູ້ຈັກແກ່ພວກເຈົ້າວ່າ
ເຮົາຕ້ອງການໃຫ້ພວກເຈົ້າເຮັດສິ່ງໃດນັບ
ຈາກເວລານີ້ຈົນເຖິງກອງປະຊຸມໃຫຍ່ຄັ້ງຕໍ່
ໄປ, ຊຶ່ງຈະຈັດຂຶ້ນໃນລັດມີເຊີຣີ, ເທິງ [ກ]ທີ່
ດິນ ຊຶ່ງເຮົາໄດ້ [ຂ]ອຸທິດໄວ້ໃຫ້ຜູ້ຄົນຂອງ
ເຮົາ, ຊຶ່ງເປັນສ່ວນໜຶ່ງ [ຄ]ທີ່ເຫລືອຢູ່ຂອງ
ຢາໂຄບ, ແລະ ຄົນເຫລົ່ານັ້ນຜູ້ເປັນທາ
ຍາດຕາມ [ງ]ພັນທະສັນຍາ.
3 ດັ່ງນັ້ນ, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ສະມິດ, ຜູ້ລູກ, ແລະ ຊິດນີ ຣິກດອນ ອອກ
ເດີນທາງທັນທີເທົ່າທີ່ຈະສາມາດຕຽມຕົວ
ຢ່າງໄວເພື່ອອອກຈາກບ້ານເຮືອນຂອງເຂົາ
ເຈົ້າ, ແລະ ເດີນທາງໄປຫາແຜ່ນດິນມີເຊີຣີ.
4 ແລະ ຕາບໃດທີ່ເຂົາເຈົ້າຊື່ສັດຕໍ່ເຮົາ,
ຈະເຮັດໃຫ້ມັນເປັນທີ່ຮູ້ຈັກແກ່ເຂົາເຈົ້າວ່າ
ເຂົາເຈົ້າຄວນເຮັດສິ່ງໃດ;
5 ແລະ ຕາບໃດທີ່ເຂົາເຈົ້າຊື່ສັດ, ຈະ
ເຮັດໃຫ້ມັນເປັນທີ່ຮູ້ຈັກແກ່ເຂົາເຈົ້ານຳອີກ
ວ່າ [ກ]ແຜ່ນດິນມູນມໍລະດົກຂອງເຂົາເຈົ້າຢູ່
ບ່ອນໃດ.
6 ແລະ ຕາບໃດທີ່ເຂົາເຈົ້າບໍ່ຊື່ສັດ, ເຂົາ
ເຈົ້າຈະຖືກຕັດອອກ, ແມ່ນແຕ່ຕາມທີ່ເຮົາ
ປະສົງ, ດັ່ງທີ່ເຮົາເຫັນວ່າດີ.
7 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບ
ໃຊ້ຂອງເຮົາ ໄລມັນ ໄວ້ ແລະ ຜູ້ຮັບໃຊ້
ຂອງເຮົາ ຈອນ ຄໍຣຽວ ອອກເດີນທາງຢ່າງ
ໄວ;
8 ແລະ ຜູ້ຮັບໃຊ້ຂອງເຮົາ ຈອນ ເມີດັອກ,
ແລະ ຜູ້ຮັບໃຊ້ຂອງເຮົາ ໄຮຣຳ ສະມິດ ນຳ
ອີກ, ອອກເດີນທາງໄປຫາບ່ອນດຽວກັນ
ໂດຍຜ່ານທາງເມືອງດີທຣອຍ.
9 ແລະ ໃຫ້ພວກເຂົາເດີນທາງຈາກບ່ອນ
ນັ້ນ ໂດຍສັ່ງສອນພຣະຄຳໄປລະຫວ່າງ
ທາງ, ໂດຍ [ກ]ບໍ່ໃຫ້ກ່າວສິ່ງໃດນອກຈາກ
ສິ່ງທີ່ [ຂ]ສາດສະດາ ແລະ ອັກຄະສາວົກໄດ້
ຂຽນໄວ້, ແລະ ສິ່ງທີ່ [ຄ]ພຣະຜູ້ປອບໂຍນ
ໄດ້ສິດສອນພວກເຂົາຜ່ານການອະທິຖານ
ດ້ວຍສັດທາເທົ່ານັ້ນ.
10 ໃຫ້ ພວກເຂົາໄປເປັນ [ກ]ຄູ່ໆ, ແລະ
ໃຫ້ພວກເຂົາສັ່ງສອນໄປລະຫວ່າງທາງໃນ
ການຊຸມນຸມທຸກບ່ອນ, ໂດຍໃຫ້ບັບຕິສະມາ
ດ້ວຍ [ຂ]ນ້ຳ, ແລະ ໂດຍການວາງ [ຄ]ມືຢູ່ແຄມ
ນ້ຳ.
11 ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້,
ເຮົາຈະຕັດວຽກງານຂອງເຮົາໃຫ້ສັ້ນລົງໃນ
[ກ]ຄວາມຊອບທຳ, ເພາະເວລາມາເຖິງແລ້ວ
ທີ່ເຮົາຈະສົ່ງການພິພາກສາອອກໄປສູ່ໄຊ
ຊະນະ.

**52** 1 *ກ* ຄມພ ເອີ້ນ, ການ ເອີ້ນ, ຖືກເອີ້ນຈາກ ພຣະເຈົ້າ, ຕຳແໜ່ງ.
2 *ກ* ຄພ 57:1–3.
*ຂ* ຄພ 58:57; 84:3–4.
*ຄ* ພສສ 135:4; 3 ນຟ 5:21–26.
*ງ* ອຣຣ 2:6–11. ຄມພ ພັນທະສັນຍາ ຂອງອັບຣາຮາມ.
5 *ກ* ຄພ 57:1–3.
9 *ກ* ມຊຍ 18:19–20.
*ຂ* ຄພ 42:12; 52:36. ຄມພ ພຣະຄຳພີ.
*ຄ* ຄມພ ສອນ, ຜູ້ສອນ, ຄູສອນ—ການສອນດ້ວຍ ພຣະວິນຍານ; ພຣະຜູ້ປອບໂຍນ; ພຣະວິນຍານບໍລິສຸດ.
10 *ກ* ມຣກ 6:7; ຄພ 61:35.
*ຂ* ຢຣ 1:26.
*ຄ* ກຈກ 8:14–17.
11 *ກ* ຣມ 9:28.

12 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ໄລມັນ ໄວ້ ລະມັດລະວັງ, ເພາະຊາຕານຢາກ [ກ]ຟັດລາວຄືກັນກັບຂີ້ແກບ.

13 ແລະ ຈົ່ງເບິ່ງ, ຄົນທີ່ [ກ]ຊື່ສັດຈະຖືກເຮັດໃຫ້ເປັນຜູ້ປົກຄອງຫລາຍສິ່ງ.

14 ແລະ ອີກເທື່ອໜຶ່ງ, ເຮົາຈະມອບແບບແຜນໃນທຸກສິ່ງໃຫ້ແກ່ພວກເຈົ້າ, ເພື່ອວ່າພວກເຈົ້າຈະບໍ່ຖືກຫລອກລວງ; ເພາະຊາຕານມີຢູ່ທົ່ວແຜ່ນດິນ, ແລະ ມັນອອກໄປຫລອກລວງບັນດາປະຊາຊາດ—

15 ດັ່ງນັ້ນ ຄົນໃດທີ່ອະທິຖານ, ຜູ້ມີວິນຍານທີ່ [ກ]ສຳນຶກຜິດ, ຄົນໆນັ້ນເຮົາຈະ [ຂ]ຮັບຮູ້ຖ້າຫາກເຂົາປະຕິບັດຕາມ [ຄ]ພິທີການຂອງເຮົາ.

16 ຄົນໃດທີ່ກ່າວ, ຜູ້ມີວິນຍານທີ່ສຳນຶກຜິດ, ຊຶ່ງພາສາຂອງເຂົາອ່ອນໂຍນ ແລະ ເສີມສ້າງ, ຄົນໆນັ້ນແມ່ນມາຈາກພຣະເຈົ້າ ຖ້າຫາກເຂົາປະຕິບັດຕາມພິທີການຂອງເຮົາ.

17 ແລະ ອີກເທື່ອໜຶ່ງ, ຄົນໃດທີ່ຕົວສັ່ນພາຍໃຕ້ອຳນາດຂອງເຮົາ ຈະຖືກເຮັດໃຫ້ [ກ]ເຂັ້ມແຂງຂຶ້ນ, ແລະ ຈະ ນຳຜົນແຫ່ງການສັນລະເສີນ ແລະ [ຂ]ປັນຍາອອກມາ, ຕາມການເປີດເຜີຍ ແລະ ຄວາມຈິງ ຊຶ່ງເຮົາໄດ້ມອບໃຫ້ພວກເຈົ້າ.

18 ແລະ ອີກເທື່ອໜຶ່ງ, ຄົນທີ່ຜ່າຍແພ້ ແລະ ບໍ່ໄດ້ [ກ]ນຳຜົນອອກມາ, ແມ່ນແຕ່ຕາມແບບແຜນນີ້, ບໍ່ໄດ້ມາຈາກເຮົາ.

19 ດັ່ງນັ້ນ, ໂດຍແບບແຜນນີ້ພວກເຈົ້າຈະ [ກ]ຮູ້ວິນຍານຕ່າງໆໃນທຸກກໍລະນີພາຍໃຕ້ຟ້າສະຫວັນທັງມວນ.

20 ແລະ ເວລາມາເຖິງແລ້ວ; ອີງຕາມສັດທາຂອງມະນຸດ ມັນຈະ [ກ]ເກີດຂຶ້ນກັບພວກເຂົາ.

21 ຈົ່ງເບິ່ງ, ຄຳບັນຊານີ້ຖືກມອບໃຫ້ແກ່ແອວເດີທຸກຄົນ ຜູ້ທີ່ເຮົາໄດ້ເລືອກໄວ້.

22 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ທອມມັສ ບີ ມາສ໌ ແລະ ຜູ້ຮັບໃຊ້ຂອງເຮົາ ເອຊະຣາ ແຕ ອອກເດີນທາງຄືກັນ, ໂດຍສັ່ງສອນພຣະຄຳໄປລະຫວ່າງທາງຫາແຜ່ນດິນດຽວກັນນັ້ນ.

23 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງເຮົາ ໄອຊິກ ມໍລີ ແລະ ຜູ້ຮັບໃຊ້ຂອງເຮົາ ເອຊະຣາ ບູທ໌ ອອກເດີນທາງ, ໂດຍສັ່ງສອນພຣະຄຳໄປລະຫວ່າງທາງຫາແຜ່ນດິນດຽວກັນນັ້ນດ້ວຍ.

24 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ ພາດທຣິດ ແລະ ມາຕິນ ແຮຣິສ ອອກເດີນທາງ ໄປກັບຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ ແລະ ໂຈເຊັບ ສະມິດ, ຜູ້ລູກ.

25 ໃຫ້ຜູ້ຮັບໃຊ້ຂອງເຮົາ ເດວິດ ວິດເມີ ແລະ ຮາວີ ວິດລ໊ອກ ອອກເດີນທາງຄືກັນ, ແລະ ສັ່ງສອນໄປລະຫວ່າງທາງຫາແຜ່ນດິນດຽວກັນນັ້ນ.

26 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ພາລີ ພີ ພະແຣັດ ແລະ [ຂ]ອໍສັນ ພະແຣັດ ອອກເດີນທາງ, ແລະ ສັ່ງສອນໄປລະຫວ່າງທາງ, ແມ່ນແຕ່ໄປຫາແຜ່ນດິນດຽວກັນນັ້ນ.

27 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຊໂລໂມນ ແຮນຄ໊ອກ ແລະ ຊາຍມັນ ຄາດເທີ

12 ກ ລກ 22:31; 3 ນຟ 18:17–18.
13 ກ ມທ 25:23; ຄພ 132:53.
15 ກ ຄມພ ຫົວໃຈທີ່ຊອກຊ້ຳ.
ຂ ຄພ 97:8.
ຄ ຄມພ ພິທີການ.
17 ກ ຄພ 66:8; 133:58.
ຂ ຄມພ ສະຕິປັນຍາ.
18 ກ ມທ 3:10.
19 ກ ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
20 ກ ມທ 8:5–13.
22 ກ ຄພ 56:5. ຄມພ ມາສ໌, ທອມມັສ ບີ.
24 ກ ຄມພ ພາດທຣິດ, ເອດເວີດ.
26 ກ ຄມພ ພະແຣັດ, ພາລີ ພາກເກີ.
ຂ ຄມພ ພະແຣັດ, ອໍສັນ.

ອອກເດີນທາງຄືກັນໄປຫາແຜ່ນດິນດຽວ
ກັນນັ້ນ, ແລະ ສັ່ງສອນໄປລະຫວ່າງທາງ.
28 ໃຫ້ຜູ້ຮັບໃຊ້ຂອງເຮົາ ເອດສັນ ຟູນເລີ
ແລະ ເຈກັບ ສະກາດ ອອກເດີນທາງຄືກັນ.
29 ໃຫ້ຜູ້ຮັບໃຊ້ຂອງເຮົາ ລີວາຍ ດັບເບີນ
ຢູ ແຮນຄ໊ອກ ແລະ ເຊເບດີ ຄໍຕຣິນ ອອກ
ເດີນທາງຄືກັນ.
30 ໃຫ້ຜູ້ຮັບໃຊ້ຂອງເຮົາ ເຣໂນນ ຄາຮູນ
ແລະ ແຊມໂຍ ເອັຈ ສະມິດ ອອກເດີນທາງ
ຄືກັນ.
31 ໃຫ້ຜູ້ຮັບໃຊ້ຂອງເຮົາ ວີເລີ ໂບວິນ
ແລະ ວິວລຽມ ຄາດເທີ ອອກເດີນທາງຄື
ກັນ.
32 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ນິວເອັນ
ໄນ້ ແລະ ສີລາ ເຈ ກຣິບຟີນ ໄດ້ຮັບການ
ແຕ່ງຕັ້ງທັງສອງ, ແລະ ອອກເດີນທາງຄື
ກັນ.
33 ແທ້ຈິງແລ້ວ, ຕາມຄວາມຈິງ ເຮົາກ່າວ
ວ່າ ໃຫ້ພວກເຂົາທຸກຄົນອອກເດີນທາງໄປ
ຫາສະຖານທີ່ແຫ່ງດຽວກັນ, ຕາມເສັ້ນທາງ
ຕ່າງໆຂອງພວກເຂົາ, ແລະ ບໍ່ໃຫ້ຄົນໃດ
ສ້າງໄວ້ເທິງ [ກ]ຮາກຖານຂອງຄົນອື່ນ, ທັງບໍ່
ໃຫ້ເດີນທາງໄປໃນເສັ້ນທາງຂອງຄົນອື່ນ.
34 ຄົນໃດທີ່ຊື່ສັດ, ຄົນໆນັ້ນຈະໄດ້ຮັບ
ການຮັກສາໄວ້ ແລະ ໄດ້ຮັບພອນດ້ວຍ
[ກ]ຜົນຢ່າງຫລວງຫລາຍ.
35 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບ
ພວກເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ເວກຟຽວ ແລະ ໂຊໂລໂມນ ຮຳຟຣີ ອອກ
ເດີນທາງໄປຫາແຜ່ນດິນທາງທິດຕາເວັນ
ອອກ;
36 ໃຫ້ພວກເຂົາອອກແຮງນຳຄອບຄົວ
ຂອງພວກເຂົາ, ໂດຍບໍ່ [ກ]ປະກາດຢ່າງອື່ນ
ນອກຈາກສິ່ງທີ່ເປັນຂອງສາດສະດາ ແລະ
ອັກຄະສາວົກ, ຊຶ່ງພວກເຂົາໄດ້ [ຂ]ເຫັນ
ແລະ ໄດ້ຍິນ ແລະ [ຄ]ເຊື່ອຢ່າງແນ່ນອນທີ່
ສຸດ, ເພື່ອວ່າຄຳທຳນາຍຈະສຳເລັດຄົບ
ຖ້ວນ.
37 ເນື່ອງຈາກການລ່ວງລະເມີດ, ຈົ່ງໃຫ້
ເອົາສິ່ງທີ່ໄດ້ມອບໃຫ້ແກ່ ຣີມັນ ແບເສັດ
[ກ]ໄປຈາກລາວ, ແລະ ມອບມັນໄວ້ເທິງຫົວ
ຂອງ ໄຊມອນສ໌ ໄຣເດີ.
38 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ [ກ]ແຕ່ງ
ຕັ້ງ ແຈເຣັດ ຄາດເທີ ເປັນປະໂລຫິດ, ແລະ
ໃຫ້ແຕ່ງຕັ້ງ ຈອດ ເຈມສ໌ ເປັນ [ຂ]ປະໂລຫິດ
ຄືກັນ.
39 ໃຫ້ແອວເດີຜູ້ທີ່ເຫລືອຢູ່ [ກ]ດູແລໜ່ວຍ
ຂອງສາດສະໜາຈັກ, ແລະ ປະກາດພຣະ
ຄຳໃນພາກພື້ນຕ່າງໆທີ່ອ້ອມຮອບພວກ
ເຂົາ; ແລະ ໃຫ້ພວກເຂົາອອກແຮງດ້ວຍ
ມືຂອງຕົນເອງ ເພື່ອວ່າພວກເຂົາຈະບໍ່ໄດ້
ເຄົາລົບ [ຂ]ຮູບບູຊາ ຫລື ເຮັດຄວາມຊົ່ວ
ຮ້າຍ.
40 ແລະ ໃນທຸກສິ່ງໃຫ້ຈື່ຈຳ [ກ]ຄົນຍາກ
ຈົນ ແລະ [ຂ]ຄົນຂັດສົນ, ຄົນເຈັບປ່ວຍ ແລະ
ຄົນທີ່ເປັນທຸກ, ເພາະຄົນໃດທີ່ບໍ່ເຮັດສິ່ງ
ເຫລົ່ານີ້, ຄົນໆນັ້ນບໍ່ໄດ້ເປັນສານຸສິດຂອງ
ເຮົາ.
41 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ ຊິດນີ
ຣິກດອນ ແລະ ເອດເວີດ ພາດທຣິດ ເອົາ

32 ກ ຄພ 56:6–7.
33 ກ ຣມ 15:20.
34 ກ ຢຣ 15:16; ຄພ 18:15–16.
36 ກ ມຊຢ 18:19–20; ຄພ 52:9.
ຂ ຢຣ 3:11.
ຄ ຄມພ ເຊື່ອ, ຄວາມເຊື່ອ.
37 ກ ມທ 25:25–30.
38 ກ ຄພ 79:1.
ຂ ຄມພ ປະໂລຫິດ, ຖານະປະໂລຫິດແຫ່ງອາໂຣນ.
39 ກ ແອວ 6:1.
ຂ ຄມພ ການນັບຖືຮູບບູຊາ.
40 ກ ຄພ 104:15–18. ຄມພ ຍາກຈົນ.
ຂ ຄມພ ຄວາມຜາສຸກ.

[ກ]ໃບຮັບຮອງຈາກສາດສະໜາຈັກໄປກັບ
ເຂົາເຈົ້າ. ແລະ ໃຫ້ມີໃບໜຶ່ງສຳລັບຜູ້ຮັບໃຊ້
ຂອງເຮົາ ອໍລີເວີ ຄາວເດີຣີ ຄືກັນ.
42 ແລະ ດັ່ງນັ້ນ, ແມ່ນແຕ່ດັ່ງທີ່ເຮົາໄດ້
ກ່າວ, ຖ້າຫາກພວກເຈົ້າຊື່ສັດ ພວກເຈົ້າຈະ
ໄປຊຸມນຸມກັນເພື່ອປີຕິຍິນດີໃນແຜ່ນດິນ
[ກ]ມີເຊີຣີ, ຊຶ່ງເປັນແຜ່ນດິນ [ຂ]ມູນມໍລະດົກ
ຂອງພວກເຈົ້າ, ຊຶ່ງຂະນະນີ້ເປັນແຜ່ນດິນ
ຂອງສັດຕູຂອງພວກເຈົ້າ.
43 ແຕ່, ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ,
ຈະເລັ່ງສ້າງເມືອງໃນເວລາອັນເໝາະສົມ,
ແລະ ຈະສວມມົງກຸດໃຫ້ຄົນຊອບທຳດ້ວຍ
[ກ]ຄວາມຊື່ນຊົມ ແລະ ຄວາມປີຕິຍິນດີ.
44 ຈົ່ງເບິ່ງ, ເຮົາຄືພຣະເຢຊູຄຣິດ, ພຣະ
ບຸດຂອງພຣະເຈົ້າ, ແລະ ເຮົາຈະ [ກ]ຍົກ
ພວກເຂົາຂຶ້ນໃນວັນສຸດທ້າຍ. ແມ່ນເປັນ
ດັ່ງນັ້ນ. ອາແມນ.

# ພາກທີ 53

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ອາເກີນິນ ຊິດນີ ກຽວເບີດ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 8 ເດືອນມິຖຸນາ, 1831. ຕາມຄຳຂໍຮ້ອງຂອງຊິດນີ ກຽວເບີດ, ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບວຽກງານ ແລະ ໜ້າທີ່ຮັບຜິດຊອບຂອງບຣາເດີ ກຽວເບີດ ໃນສາດສະໜາຈັກ.*

*1–3, ການເອີ້ນ ແລະ ການເລືອກຂອງ ຊິດນີ ກຽວເບີດ ໃນສາດສະໜາຈັກຄືການຖືກແຕ່ງຕັ້ງເປັນແອວເດີ; 4–7, ລາວຕ້ອງຮັບໃຊ້ເປັນຕົວແທນໃຫ້ອະທິການນຳອີກ.*

1 ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ, ຜູ້ຮັບໃຊ້
ຂອງເຮົາ ຊິດນີ ກຽວເບີດ, ວ່າເຮົາໄດ້ຍິນ
ຄຳອະທິຖານຂອງເຈົ້າ; ແລະ ເຈົ້າໄດ້ເອີ້ນ
ຫາເຮົາ ເພື່ອມັນຈະໄດ້ເປັນທີ່ຮູ້ຈັກແກ່ເຈົ້າ,
ຜູ້ເປັນພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງເຈົ້າ, ກ່ຽວກັບການເອີ້ນ ແລະ ການ
ເລືອກຂອງເຈົ້າໃນສາດສະໜາຈັກ, ຊຶ່ງ
ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ [ກ]ຍົກຂຶ້ນໃນຍຸກ
ສຸດທ້າຍນີ້.
2 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ຜູ້ຖືກ
[ກ]ຄຶງເພື່ອບາບຂອງໂລກ, ມອບບັນຍັດຂໍ້
ໜຶ່ງໃຫ້ແກ່ເຈົ້າວ່າ ເຈົ້າຈົ່ງ [ຂ]ປະຖິ້ມໂລກ.
3 ຈົ່ງຮັບເອົາການແຕ່ງຕັ້ງຈາກເຮົາ
ໄວ້ກັບເຈົ້າ, ແມ່ນແຕ່ການແຕ່ງຕັ້ງເປັນ
ແອວເດີ, ເພື່ອສັ່ງສອນສັດທາ ແລະ ການ
ກັບໃຈ ແລະ [ກ]ການປົດບາບ, ຕາມຄຳຂອງ
ເຮົາ, ແລະ ການຮັບເອົາພຣະວິນຍານສັກ
ສິດໂດຍການວາງ [ຂ]ມື;
4 ແລະ ເພື່ອເປັນ [ກ]ຕົວແທນໃຫ້ແກ່ສາດ
ສະໜາຈັກນຳອີກ ໃນບ່ອນທີ່ອະທິການຈະ

41 *ກ* ຄພ 20:64.
42 *ກ* ຄມພ ຊີໂອນ.
*ຂ* ຄພ 25:2; 57:1–3.
43 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
44 *ກ* ຄພ 88:96–98.
**53** 1 *ກ* ຄມພ ຖືກເລືອກ; ເລືອກ, ການເລືອກ; ເອີ້ນ, ການເອີ້ນ ແລະ ການເລືອກ.
2 *ກ* ຄມພ ຄຶງ, ການຄຶງ.
*ຂ* ຄມພ ຄວາມເປັນຢູ່ ທາງໂລກ; ໂລກ.
3 *ກ* ຄມພ ປົດບາບ, ການປົດບາບ.
*ຂ* ຄມພ ມື, ການວາງ.
4 *ກ* ຄພ 57:6, 8–10, 14–15; 84:113.

ກຳນົດ, ຕາມພຣະບັນຊາຊຶ່ງຈະມອບໃຫ້
ໃນພາຍຫລັງ.
5 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວກັບເຈົ້າວ່າ ໃຫ້ເຈົ້າເດີນທາງ
ໄປກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ,
ຜູ້ລູກ, ແລະ ຊິດນີ ຣິກດອນ.
6 ຈົ່ງ ເບິ່ງ, ສິ່ງເຫລົ່ານີ້ເປັນພິທີການທຳ
ອິດ ຊຶ່ງເຈົ້າຈະໄດ້ຮັບ; ແລະ ສ່ວນທີ່ເຫລືອ
ຢູ່ຈະຖືກເຮັດໃຫ້ເປັນທີ່ຮູ້ຈັກໃນເວລາທີ່ຈະ
ມາເຖິງ, ຕາມວຽກງານຂອງເຈົ້າໃນສວນ
ອະງຸ່ນຂອງເຮົາ.
7 ແລະ ອີກເທື່ອໜຶ່ງ, ເຮົາຢາກໃຫ້ເຈົ້າ
ຮຽນຮູ້ວ່າ ຄົນທີ່ຈະລອດຄືຄົນທີ່ [ກ]ອົດທົນ
ຈົນເຖິງທີ່ສຸດ. ແມ່ນເປັນດັ່ງນັ້ນ. ອາແມນ.

## ພາກທີ 54

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ນິວເອັນ ໄນ້, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 10 ເດືອນມິຖຸນາ, 1831. ສະມາຊິກຂອງສາດສະໜາຈັກທີ່ອາໄສຢູ່ໃນເມືອງທອມສັນ, ລັດໂອໄຮໂອ, ແຕກແຍກກັນເພາະບັນຫາກ່ຽວກັບການອຸທິດຖວາຍຊັບສິນ. ຄວາມເຫັນແກ່ຕົວ ແລະ ຄວາມໂລບມາກໂລພາສະແດງໃຫ້ປະຈັກ. ຫລັງຈາກການໄປເຜີຍແຜ່ຂອງລາວ ຕໍ່ຊາວເຊເກີແລ້ວ (ເບິ່ງ ຫົວຂໍ້ຂອງ ພາກທີ 49), ລີມັນ ຄອບລີ ໄດ້ຝ່າຝືນພັນທະສັນຍາຂອງລາວທີ່ຈະອຸທິດຖວາຍທີ່ດິນຕອນກວ້າງໃຫຍ່ຂອງລາວໃຫ້ເປັນມູນມໍລະດົກສຳລັບໄພ່ພົນຂອງພຣະເຈົ້າທີ່ມາຈາກເມືອງໂຄນສະວຽວ, ລັດນິວຢອກ. ຜົນທີ່ຕາມມາກໍຄື, ນິວເອັນ ໄນ້ (ຜູ້ນຳຂອງສະມາຊິກທີ່ອາໄສຢູ່ເມືອງທອມສັນ) ແລະ ແອວເດີຄົນອື່ນໆໄດ້ມາຖາມສາດສະດາກ່ຽວກັບວິທີທີ່ຈະດຳເນີນການຕໍ່ໄປ. ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການເປີດເຜີຍນີ້, ຊຶ່ງບັນຊາໃຫ້ສະມາຊິກໃນເມືອງທອມສັນ ໜີໄປຈາກທີ່ດິນຂອງລີມັນ ຄອບລີ ແລະ ເດີນທາງໄປຫາລັດມິເຊີຣີ.*

*1–6, ໄພ່ພົນຂອງພຣະເຈົ້າຕ້ອງຮັກສາພັນທະສັນຍາແຫ່ງພຣະກິດຕິຄຸນເພື່ອຈະໄດ້ຮັບຄວາມເມດຕາ; 7–10, ພວກເຂົາຕ້ອງອົດທົນໃນຄວາມທຸກຍາກລຳບາກ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້,
ແມ່ນແຕ່ [ກ]ອາລະຟາ ແລະ ໂອເມຄາ, ເປັນ
ຕົ້ນ ແລະ ທີ່ສຸດ, ແມ່ນແຕ່ຜູ້ຖືກ [ຂ]ຄຶງເພື່ອ
ບາບຂອງໂລກ—
2 ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາ
ກ່າວກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາ ນິວເອັນ
ໄນ້, ເຈົ້າຈະຕ້ອງຍຶດໝັ້ນຢູ່ໃນຕຳແໜ່ງທີ່
ເຮົາໄດ້ແຕ່ງຕັ້ງເຈົ້າ.
3 ແລະ ຖ້າຫາກພີ່ນ້ອງຂອງເຈົ້າປາດຖະ
ໜາທີ່ຈະຫລົບໜີຈາກສັດຕູຂອງພວກເຂົາ,
ໃຫ້ພວກເຂົາກັບໃຈຈາກບາບທັງໝົດຂອງ
ພວກເຂົາ, ແລະ ກັບກາຍມາ [ກ]ຖ່ອມຕົວ
ແທ້ໆຢູ່ຕໍ່ໜ້າເຮົາ ແລະ ສຳນຶກຜິດ.
4 ແລະ ເນື່ອງດ້ວຍ [ກ]ພັນທະສັນຍາ ຊຶ່ງ
ພວກເຂົາໄດ້ເຮັດກັບເຮົາຖືກຝ່າຝືນ, ແມ່ນ

7 *ກ* ຄມພ ອົດທົນ, ຄວາມອົດທົນ.
**54** 1 *ກ* ພນມ 1:8; ຄພ 19:1. ຄມພ ອາລະຟາ ແລະ ໂອເມຄາ.
*ຂ* ຄມພ ຄຶງ, ການຄຶງ.
3 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
4 *ກ* ຄພ 42:30–39. ຄມພ ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.

ແຕ່ ເປັນ ເຊັ່ນ ນັ້ນ ມັນກາຍ ເປັນສິ່ງ [ຂ]ບໍ່ ມີ ຄວາມໝາຍ ແລະ ບໍ່ເກີດຜົນເລີຍ.

5 ແລະ ວິບັດແກ່ເຂົາຜູ້ກໍ່ [ກ]ຄວາມຜິດນີ້, ເພາະ ມັນ ຈະ ເປັນສິ່ງ ດີກວ່າ ຖ້າຫາກເຂົາ ຖືກ ເອົາຫີນກ້ອນ ໃຫຍ່ຜູກຄໍ ແລະ ຖິ້ມລົງ ໃນຄວາມເລິກຂອງທະເລ.

6 ແຕ່ຄົນທີ່ໄດ້ຮັກສາພັນທະສັນຍາ ແລະ ຍຶດຖືບັນຍັດຍ່ອມເປັນສຸກ, ເພາະ ເຂົາຈະ ໄດ້ຮັບ [ກ]ຄວາມເມດຕາ.

7 ດັ່ງ ນັ້ນ, ບັດ ນີ້ ຈົ່ງ ໄປ ແລະ ຫລົບ ໜີ ຈາກແຜ່ນດິນ, ຖ້າບໍ່ດັ່ງນັ້ນສັດຕູຂອງພວກ ເຈົ້າ ຈະ ມາ ໂຈມຕີພວກ ເຈົ້າ; ແລະ ອອກ ເດີນທາງ, ແລະ ກຳນົດຜູ້ໜຶ່ງຕາມແຕ່ພວກ ເຈົ້າ ປະສົງ ໃຫ້ ເປັນ ຜູ້ ນຳຂອງພວກ ເຈົ້າ, ແລະ ໃຫ້ຈ່າຍເງິນແທນພວກເຈົ້າ.

8 ແລະ ດັ່ງ ນັ້ນ ພວກ ເຈົ້າ ຈະ ອອກ ເດີນ ທາງ ໄປ ຫາພາກພື້ນທາງຕາເວັນຕົກ, ໄປ ຫາແຜ່ນດິນ [ກ]ມີ ເຊີຣີ, ຫາຊາຍແດນຂອງ ຊາວເລມັນ.

9 ແລະ ຫລັງຈາກພວກເຈົ້າໄດ້ເດີນທາງ ໄປຮອດແລ້ວ, ຈົ່ງເບິ່ງ, ເຮົາກ່າວກັບພວກ ເຈົ້າວ່າ ໃຫ້ [ກ]ຫາລ້ຽງຊີບຄືກັນກັບຄົນອື່ນໆ, ຈົນກວ່າເຮົາຈະຕຽມສະຖານທີ່ໄວ້ໃຫ້ພວກ ເຈົ້າ.

10 ແລະ ອີກ ເທື່ອ ໜຶ່ງ, ຈົ່ງ [ກ]ອົດ ທົນ ໃນ ຄວາມ ທຸກ ຍາກ ລຳ ບາກ ຈົນ ກວ່າ ເຮົາ ຈະ [ຂ]ມາ; ແລະ, ຈົ່ງເບິ່ງ, ເຮົາມາຢ່າງໄວ, ແລະ ລາງ ວັນ ຂອງ ເຮົາ ຢູ່ ກັບ ເຮົາ, ແລະ ຄົນ ທີ່ [ຄ]ຊອກຫາເຮົາແຕ່ຕອນຕົ້ນ ຈະພົບ [ງ]ຄວາມ ພັກຜ່ອນ ໃນ ຈິດ ວິນຍານຂອງເຂົາ. ແມ່ນ ເປັນດັ່ງນັ້ນ. ອາແມນ.

# ພາກທີ 55

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ວິວລຽມ ດັບເບິນຢູ ແຟ້ວສ໌, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 14 ເດືອນມິຖຸນາ, 1831. ວິວລຽມ ດັບເບິນ ຢູ ແຟ້ວສ໌ ຜູ້ເປັນນັກພິມ, ແລະ ຄອບຄົວຂອງລາວຫາກໍມາເຖິງເມືອງເຄີດແລນ, ແລະ ສາດ ສະດາໄດ້ທູນຖາມພຣະຜູ້ເປັນເຈົ້າສຳລັບຂໍ້ມູນກ່ຽວກັບລາວ.*

*1–3, ວິວລຽມ ດັບເບິນຢູ ແຟ້ວສ໌ ໄດ້ຖືກ ເອີ້ນ ແລະ ໄດ້ຖືກເລືອກໃຫ້ຮັບບັບຕິ ສະມາ, ໄດ້ຖືກແຕ່ງຕັ້ງເປັນແອວເດີ, ແລະ ໃຫ້ສັ່ງສອນພຣະກິດຕິຄຸນ; 4, ລາວຕ້ອງ ຂຽນປຶ້ມສຳລັບເດັກນ້ອຍໃນໂຮງຮຽນຂອງ ສາດສະໜາຈັກ; 5–6, ລາວຕ້ອງເດີນທາງ ໄປລັດມີເຊີຣີ, ຊຶ່ງຈະເປັນເຂດບ່ອນທຳ ງານຂອງລາວ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ ກັບ ເຈົ້າ, ຜູ້ຮັບໃຊ້ຂອງເຮົາ ວິວລຽມ, ແທ້ ຈິງ ແລ້ວ, ແມ່ນ ແຕ່ ພຣະຜູ້ເປັນເຈົ້າຂອງ

4 *ຂ* ຄພ 58:32–33.
5 *ກ* ມທ 18:6–7.
6 *ກ* ຄມພ ເມດຕາ, ມີເມດ ຕາ, ຄວາມເມດຕາ.
8 *ກ* ຄພ 52:42.
9 *ກ* 1 ທສນ 4:11.
10 *ກ* ຄມພ ອົດທົນ, ຄວາມອົດທົນ.
*ຂ* ພນມ 22:12. ຄມພ ການສະເດັດມາຄັ້ງທີ ສອງຂອງພຣະເຢຊູຄຣິດ.
*ຄ* ສພສ 8:17. ຄມພ ອະທິຖານ, ການອະ ທິຖານ, ຄຳອະທິຖານ.
*ງ* ມທ 11:28–30. ຄມພ ພັກຜ່ອນ.

ທັງ ᵍແຜ່ນດິນໂລກ, ເຈົ້າໄດ້ຖືກເອີ້ນ ແລະ ໄດ້ຖືກເລືອກ; ແລະ ຫລັງຈາກເຈົ້າໄດ້ຮັບ ᵉບັບຕິສະມາໂດຍນ້ຳ ແລ້ວ, ຊຶ່ງຖ້າຫາກເຈົ້າເຮັດເພາະການທີ່ເຫັນແກ່ລັດສະໝີພາບຂອງເຮົາແຕ່ຢ່າງດຽວ, ເຈົ້າຈະໄດ້ຮັບການປົດບາບຂອງເຈົ້າ ແລະ ໄດ້ຮັບພຣະວິນຍານສັກສິດໂດຍການວາງ ᶠມື;

2 ແລະ ຈາກນັ້ນເຈົ້າຈະໄດ້ຮັບການແຕ່ງຕັ້ງໂດຍມືຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ ໃຫ້ເປັນແອວເດີສຳລັບສາດສະໜາຈັກນີ້, ເພື່ອສັ່ງສອນການກັບໃຈ ແລະ ᵍການປົດບາບໂດຍແບບແຜນຂອງການບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່.

3 ແລະ ຄົນໃດກໍຕາມທີ່ເຈົ້າຈະວາງມືໃສ່, ຖ້າຫາກເຂົາສຳນຶກຜິດຢູ່ຕໍ່ໜ້າເຮົາ, ເຈົ້າຈະມີອຳນາດທີ່ຈະມອບພຣະວິນຍານສັກສິດໃຫ້.

4 ແລະ ອີກເທື່ອໜຶ່ງ, ເຈົ້າຈະໄດ້ຮັບການແຕ່ງຕັ້ງໃຫ້ຊ່ວຍເຫລືອຜູ້ຮັບໃຊ້ຂອງເຮົາ ອໍລີເວີ ຄາວເດີຣີ ເຮັດ ວຽກງານເລື່ອງການພິມ, ແລະ ການເລືອກ ແລະ ການຂຽນ ᵍປຶ້ມສຳລັບໂຮງຮຽນໃນສາດສະໜາຈັກນີ້, ເພື່ອວ່າເດັກນ້ອຍໆຈະໄດ້ຮັບຄຳແນະນຳຢູ່ຕໍ່ໜ້າເຮົານຳອີກ ດັ່ງທີ່ໜ້າພໍໃຈສຳລັບເຮົາ.

5 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ເພາະເຫດນີ້ເຈົ້າຈະຕ້ອງອອກເດີນທາງໄປກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ ຊິດນີ ຣິກດອນ, ເພື່ອວ່າເຈົ້າຈະໄດ້ ᵍຕັ້ງຮາກຖານຢູ່ໃນ ແຜ່ນດິນມູນມໍລະດົກຂອງເຈົ້າ ເພື່ອເຮັດວຽກງານນີ້.

6 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ໂຄ ອອກເດີນທາງໄປກັບພວກເຂົາຄືກັນ. ສ່ວນທີ່ເຫລືອຢູ່ຈະຖືກເຮັດໃຫ້ເປັນທີ່ຮູ້ຈັກໃນພາຍໜ້າ, ແມ່ນແຕ່ດັ່ງທີ່ເຮົາປະສົງ. ອາແມນ.

---

# ພາກທີ 56

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 15 ເດືອນມິຖຸນາ, 1831. ການເປີດເຜີຍນີ້ ຕິສອນເອຊະຣາ ແຕ ເພາະການບໍ່ເຊື່ອຟັງຕໍ່ການເປີດເຜີຍທີ່ຜ່ານມາ ("ພຣະບັນຍັດ" ທີ່ໄດ້ກ່າວເຖິງຢູ່ໃນຂໍ້ທີ 8), ຊຶ່ງໂຈເຊັບ ສະມິດ ໄດ້ຮັບສຳລັບລາວ, ແນະນຳນາຍແຕ ກ່ຽວກັບໜ້າທີ່ຂອງລາວ ຢູ່ໄຮ່ຂອງເຟຣ໌ເດຣິກ ຈີ ວິວລຽມສ໌, ບ່ອນທີ່ລາວໄດ້ອາໄສຢູ່. ການເປີດເຜີຍດັ່ງຕໍ່ໄປນີ້ ແມ່ນກ່ຽວກັບການຍົກເລີກການເອີ້ນຂອງນາຍແຕ ທີ່ຈະເດີນທາງໄປລັດມິເຊີຣີ ກັບທອມມັສ ບີ ມາສ໌ (ເບິ່ງ ພາກທີ 52:22).*

*1–2, ໄພ່ພົນຂອງພຣະເຈົ້າຕ້ອງແບກໄມ້ກາງແຂນຂອງພວກເຂົາ ແລະ ຕິດຕາມພຣະຜູ້ເປັນເຈົ້າໄປ ເພື່ອຈະໄດ້ຮັບຄວາມລອດ; 3–13, ພຣະຜູ້ເປັນເຈົ້າບັນຊາ ແລະ ຍົກເລີກ, ແລະ ຄົນທີ່ບໍ່ເຊື່ອຟັງຖືກຕັດອອກ; 14–17, ວິບັດແກ່ຄົນຮັ່ງມີຜູ້ຈະບໍ່*

---

**55** 1*ກ* ພບຍ 10:14; 1 ນຟ 11:6; 2 ນຟ 29:7.
*ຂ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຄ* ຄມພ ມື, ການວາງ.
2*ກ* ຄມພ ປົດບາບ, ການປົດບາບ.
4*ກ* ຄພ 88:118; 109:7, 14.
5*ກ* ອມ 9:15.

*ຊ່ວຍ ເຫລືອ ຄົນ ຍາກ ຈົນ, ແລະ ວິບັດ ແກ່
ຄົນຍາກຈົນຜູ້ທີ່ຫົວໃຈບໍ່ຊອກຊໍ້າ; 18–20,
ຄົນຍາກຈົນທີ່ມີໃຈບໍລິສຸດຍ່ອມເປັນສຸກ,
ເພາະເຂົາຈະໄດ້ຮັບແຜ່ນດິນໂລກເປັນມູນ
ມໍລະດົກ.*

1 ຈົ່ງເຊື່ອຟັງ, ໂອ້ ເຈົ້າຜູ້ຄົນທີ່ [ກ]ອ້າງນາມ
ຂອງ ເຮົາ, ພຣະຜູ້ເປັນເຈົ້າ ອົງເປັນພຣະ
ເຈົ້າຂອງເຈົ້າໄດ້ກ່າວ; ເພາະຈົ່ງເບິ່ງ, ພຣະ
ພິໂລດຂອງເຮົາເກີດກັບຄົນກະບົດ, ແລະ
ເຂົາ ຈະ ຮູ້ ແຂນ ຂອງ ເຮົາ ແລະ ຮູ້ ຄວາມ
ເຄືອງແຄ້ນຂອງເຮົາ, ໃນວັນແຫ່ງການມາ
[ຂ]ຢ້ຽມຢາມ ແລະ ແຫ່ງພຣະພິໂລດເທິງປະ
ຊາຊາດ.
2 ແລະ ຄົນ ໃດ ທີ່ ຈະ ບໍ່ ແບກ [ກ]ໄມ້ ກາງ
ແຂນ ຂອງ ເຂົາ ແລະ [ຂ]ຕິດ ຕາມ ເຮົາ ໄປ,
ແລະ ຮັກສາບັນຍັດຂອງເຮົາ, ຄົນໆນັ້ນຈະ
ບໍ່ລອດ.
3 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ບັນຊາ;
ແລະ ຄົນ ທີ່ ບໍ່ [ກ]ເຊື່ອຟັງຈະຖືກ [ຂ]ຕັດອອກ
ໃນເວລາອັນເໝາະສົມຂອງເຮົາເອງ, ຫລັງ
ຈາກເຮົາບັນຊາ ແລະ ບັນຍັດຖືກຝ່າຝືນ.
4 ດັ່ງນັ້ນ ເຮົາ, ພຣະຜູ້ເປັນເຈົ້າ, ບັນຊາ
ແລະ [ກ]ຍົກເລີກ, ດັ່ງທີ່ເຮົາເຫັນວ່າດີ; ແລະ
ທັງໝົດນີ້ຈະຖືກຕອບຢູ່ເທິງຫົວຂອງ [ຂ]ຄົນ
ກະບົດ, ພຣະຜູ້ເປັນເຈົ້າໄດ້ກ່າວ.
5 ດັ່ງ ນັ້ນ, ເຮົາ ຈຶ່ງ ຍົກເລີກບັນຍັດ ຊຶ່ງ
ມອບໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ [ກ]ທອມມັສ
ບີ ມາສ໌ ແລະ ເອຊະຣາ ແຕ, ແລະ ມອບ
ບັນຍັດໃໝ່ຂໍ້ໜຶ່ງໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ
ທອມມັສ, ວ່າໃຫ້ລາວອອກເດີນທາງຢ່າງ
ໄວໄປຫາແຜ່ນດິນມີເຊີຣີ, ແລະ ໃຫ້ຜູ້ຮັບ
ໃຊ້ຂອງເຮົາ ສີລາ ເຈ ກຣິບຟິນ ໄປກັບລາວ
ຄືກັນ.
6 ເພາະຈົ່ງເບິ່ງ, ເຮົາຍົກເລີກບັນຍັດ ຊຶ່ງ
ໄດ້ມອບໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ສີລາ ເຈ
ກຣິບຟິນ ແລະ ນິວເອັນ ໄນ້, ເນື່ອງດ້ວຍ
ຄວາມ ແຂງ ຄໍ ຂອງຜູ້ຄົນ ຂອງ ເຮົາຢູ່ ໃນ
ເມືອງທອມສັນ, ແລະ ການກະບົດ ຂອງ
ພວກເຂົາ.
7 ດັ່ງນັ້ນ, ໃຫ້ຜູ້ຮັບໃຊ້ຂອງເຮົາ ນິວເອັນ
ໄນ້ ຢູ່ກັບພວກເຂົາ; ແລະ ຫລາຍຕໍ່ຫລາຍ
ຄົນທີ່ຢາກຈະໄປ ກໍໄປໄດ້, ທີ່ສຳນຶກຜິດຢູ່ຕໍ່
ໜ້າເຮົາ, ແລະ ໃຫ້ລາວພາພວກເຂົາໄປຫາ
ແຜ່ນດິນຊຶ່ງເຮົາໄດ້ກຳນົດໄວ້.
8 ແລະ ອີກ ເທື່ອ ໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຜູ້ຮັບໃຊ້
ຂອງເຮົາ ເອຊະຣາ ແຕ ຕ້ອງກັບ ໃຈຈາກ
[ກ]ຄວາມທະນົງຕົວຂອງລາວ, ແລະ ຄວາມ
ເຫັນ ແກ່ຕົວຂອງລາວ, ແລະ ເຊື່ອຟັງບັນ
ຍັດກ່ອນນັ້ນຊຶ່ງເຮົາໄດ້ມອບໃຫ້ລາວກ່ຽວ
ກັບສະຖານທີ່ ທີ່ລາວອາໄສຢູ່.
9 ແລະ ຖ້າ ຫາກ ລາວ ຈະ ເຮັດ ສິ່ງ ນີ້,
ເພາະວ່າຈະບໍ່ມີການແບ່ງແຍກທີ່ດິນ, ລາວ
ຈະຍັງຖືກກຳນົດໃຫ້ໄປຫາແຜ່ນດິນມີເຊີຣີ
ຢູ່;
10 ບໍ່ດັ່ງນັ້ນລາວຈະໄດ້ຮັບເງິນ ຊຶ່ງລາວ
ໄດ້ຈ່າຍໄປ, ແລະ ໜີຈາກບ່ອນນັ້ນ, ແລະ
ຈະ ຖືກ [ກ]ຕັດອອກ ຈາກ ສາດສະໜາຈັກ
ຂອງເຮົາ, ອົງພຣະຜູ້ເປັນເຈົ້າຈອມໂຍທາ
ໄດ້ກ່າວ;
11 ແລະ ເຖິງ ແມ່ນ ຟ້າ ສະຫວັນ ແລະ

**56** 1 *ກ* ຄພ 41:1.
*ຂ* ອຊຢ 10:3–4; ມມ 9:2;
ຄພ 1:13–14; 124:10.
2 *ກ* ລກ 14:27.
*ຂ* 1 ປຕ 2:21;
2 ນຟ 31:10–13;
ມຣນ 7:11.
ຄມພ ພຣະເຢຊູຄຣິດ—ຕົວ
ຢ່າງຂອງພຣະເຢຊູຄຣິດ.
3 *ກ* ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.
*ຂ* ຄພ 1:14–16; 50:8.
4 *ກ* ຄພ 58:31–33.
*ຂ* ຄມພ ກະບົດ, ການກະບົດ.
5 *ກ* ຄມພ ມາສ໌, ທອມມັສ ບີ.
8 *ກ* ຄມພ ຈອງຫອງ,
ຄວາມຈອງຫອງ.
10 *ກ* ຄມພ ການຖືກໄລ່ອອກ.

ແຜ່ນດິນໂລກຈະສູນສິ້ນໄປ, ຄຳຂອງເຮົາ
ຈະບໍ່ [ກ]ສູນສິ້ນໄປ, ແຕ່ຈະເກີດເປັນຈິງ.
12 ແລະ ຖ້າຫາກຜູ້ ຮັບ ໃຊ້ຂອງເຮົາ
ໂຈເຊັບ ສະມິດ, ຜູ້ລູກ, ຈຳເປັນຕ້ອງຈ່າຍ
ເງິນໃຫ້, ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ຈະ
ຈ່າຍໃຫ້ລາວອີກໃນແຜ່ນດິນມີເຊີຣີ, ເພື່ອ
ວ່າຄົນເຫລົ່ານັ້ນຜູ້ຊຶ່ງລາວຈະໄດ້ຮັບເງິນ
ນຳ ຈະໄດ້ຮັບລາງວັນຕອບແທນຕາມສິ່ງທີ່
ພວກເຂົາເຮັດ;
13 ເພາະຕາມສິ່ງທີ່ພວກເຂົາເຮັດ ພວກ
ເຂົາຈະໄດ້ຮັບ, ແມ່ນແຕ່ແຜ່ນດິນເພື່ອເປັນ
ມູນມໍລະດົກຂອງພວກເຂົາ.
14 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງ
ນີ້ກັບຜູ້ຄົນຂອງເຮົາ—ພວກເຈົ້າມີຫລາຍ
ສິ່ງທີ່ຈະເຮັດ ແລະ ກັບໃຈ; ເພາະຈົ່ງເບິ່ງ,
ບາບຂອງພວກເຈົ້າໄດ້ຂຶ້ນມາຫາເຮົາ,
ແລະ ບໍ່ໄດ້ຮັບການໃຫ້ອະໄພ, ເພາະພວກ
ເຈົ້າສະແຫວງຫາ [ກ]ຄຳແນະນຳໃນວິທີທາງ
ຂອງພວກເຈົ້າເອງ.
15 ແລະ ພວກເຈົ້າບໍ່ພໍໃຈ. ແລະ ພວກ
ເຈົ້າບໍ່ເຊື່ອຟັງຄວາມຈິງ, ແຕ່ມີ [ກ]ຄວາມສຸກ
ຢູ່ກັບຄວາມບໍ່ຊອບທຳ.
16 ວິບັດ ແກ່ເຈົ້າຄົນທີ່ [ກ]ຮັ່ງມີ, ທີ່ຈະບໍ່
[ຂ]ມອບ ເຂົ້າຂອງ ຂອງເຈົ້າໃຫ້ຄົນ [ຄ]ຍາກ
ຈົນ, ເພາະ [ງ]ຄວາມຮັ່ງມີຂອງເຈົ້າຈະເຮັດ
ໃຫ້ຈິດວິນຍານຂອງເຈົ້າເປື່ອຍເນົ່າ; ແລະ
ສິ່ງນີ້ຈະເປັນການຮ້ອງຄວນຄາງຂອງເຈົ້າ
ໃນວັນແຫ່ງການມາຢ້ຽມຢາມ, ແລະ ແຫ່ງ
ການພິພາກສາ, ແລະ ແຫ່ງຄວາມເຄືອງ
ແຄ້ນ: [ຈ]ການເກັບກ່ຽວໄດ້ຜ່ານພົ້ນໄປ, ລະ
ດູຮ້ອນໄດ້ສິ້ນສຸດລົງແລ້ວ, ແລະ ຈິດວິນ
ຍານຂອງເຮົາບໍ່ລອດ!
17 ວິບັດແກ່ເຈົ້າຄົນທີ່ [ກ]ຍາກຈົນ, ຜູ້ທີ່
ຫົວໃຈບໍ່ຊອກຊ້ຳ, ຜູ້ທີ່ວິນຍານບໍ່ສຳນຶກ
ຜິດ, ແລະ ຜູ້ທີ່ທ້ອງບໍ່ເຄີຍອີ່ມ, ແລະ ຜູ້ທີ່
ມືບໍ່ເຄີຍຢັບຢັ້ງຈາກການຍຶດເອົາສິ່ງຂອງ
ຂອງຄົນອື່ນ, ຜູ້ທີ່ຕາເຕັມໄປດ້ວຍ [ຂ]ຄວາມ
ໂລບມາກໂລພາ, ແລະ ຜູ້ທີ່ຈະບໍ່ອອກແຮງ
ດ້ວຍມືຂອງຕົນເອງ!
18 ແຕ່ [ກ]ຄົນຍາກຈົນທີ່ມີໃຈບໍລິສຸດຍ່ອມ
ເປັນສຸກ, ຜູ້ທີ່ຫົວໃຈ [ຂ]ຊອກຊ້ຳ, ແລະ ຜູ້
ທີ່ວິນຍານສຳນຶກຜິດ, ເພາະເຂົາຈະເຫັນ
[ຄ]ອານາຈັກຂອງພຣະເຈົ້າມາໃນອຳນາດ
ແລະ ລັດສະໝີພາບອັນຍິ່ງໃຫຍ່ເພື່ອປົດ
ປ່ອຍເຂົາ; ເພາະຄວາມອຸດົມສົມບູນຂອງ
[ງ]ແຜ່ນດິນໂລກຈະເປັນຂອງເຂົາ.
19 ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າຈະ
ມາ, ແລະ [ກ]ສິ່ງຊົດເຊີຍຂອງພຣະອົງຈະຢູ່
ນຳພຣະອົງ, ແລະ ພຣະອົງຈະໃຫ້ລາງວັນ
ແກ່ມະນຸດທຸກຄົນ, ແລະ ຄົນຍາກຈົນຈະປິ
ຕິຍິນດີ;
20 ແລະ ລູກຫລານຂອງພວກເຂົາຈະໄດ້
ຮັບແຜ່ນດິນໂລກເປັນ [ກ]ມູນມໍລະດົກ ຈາກ
ລຸ້ນສູ່ລຸ້ນ, ຕະຫລອດການ ແລະ ຕະຫລອດ
ໄປ. ແລະ ບັດນີ້ ເຮົາຢຸດຕິການກ່າວກັບ
ພວກເຈົ້າ. ແມ່ນເປັນດັ່ງນັ້ນ. ອາແມນ.

11 ກ 2 ນຟ 9:16.
14 ກ ຢຄ 4:10.
15 ກ ແອວ 41:10; 3 ນຟ 27:11.
16 ກ ຢມຢ 17:11; 2 ນຟ 9:30.
ຂ ຄມພ ໃຫ້ທານ, ການໃຫ້ທານ.
ຄ ສພສ 14:31; ແອວ 5:55–56. ຄມພ ຍາກຈົນ.
ງ ຢກບ 5:3.
ຈ ຢມຢ 8:20; ແອວ 34:33–35; ຄພ 45:2.
17 ກ ມຊຍ 4:24–27; ຄພ 42:42; 68:30–32.
ຂ ຄມພ ໂລບ, ຄວາມໂລບ.
18 ກ ມທ 5:3, 8; ລກ 6:20; 3 ນຟ 12:3. ຄມພ ຍາກຈົນ.
ຂ ຄມພ ຫົວໃຈທີ່ຊອກຊ້ຳ.
ຄ ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
ງ ຄມພ ແຜ່ນດິນໂລກ.
19 ກ ພນມ 22:12; ຄພ 1:10.
20 ກ ມທ 5:5; ຄພ 45:56–58.

# ພາກທີ 57

*ການ ເປີດ ເຜີຍ ທີ່ ມອບ ໃຫ້ ຜ່ານ ໂຈເຊັບ ສະມິດ ຜູ້ ເປັນ ສາດ ສະ ດາ, ໃນ ຊີໂອນ, ເຂດ ແຈັກສັນ, ລັດມີເຊີຣີ, ວັນທີ 20 ເດືອນກໍລະກົດ, 1831. ເພື່ອເຮັດໃຫ້ເປັນໄປຕາມພຣະບັນ ຊາຂອງພຣະຜູ້ເປັນເຈົ້າ ເພື່ອໃຫ້ເດີນທາງໄປຫາລັດມີເຊີຣີ ບ່ອນທີ່ພຣະອົງຈະເປີດເຜີຍ " ແຜ່ນດິນມູນມໍລະດົກຂອງພວກເຈົ້າ" (ພາກທີ 52), ພວກແອວເດີຈຶ່ງໄດ້ເດີນທາງຈາກລັດ ໂອໄຮໂອ ໄປຫາຊາຍແດນພາກຕາເວັນຕົກຂອງລັດມີເຊີຣີ. ໂຈເຊັບ ສະມິດ ໄດ້ ໄຕ່ຕອງ ກ່ຽວກັບສະພາບການຂອງຊາວເລມັນ ແລະ ສົງໄສວ່າ: "ເມື່ອໃດບໍ່ຖິ່ນແຫ້ງແລ້ງກັນດານ ຈະບານສະພັ່ງເໝືອນດັ່ງດອກກຸຫລາບ? ເມື່ອໃດບໍ່ຊີໂອນຈຶ່ງຈະຖືກສ້າງຂຶ້ນໃນລັດສະໝີ ພາບຂອງມັນ, ແລະ ບ່ອນໃດບໍ່ພຣະວິຫານຂອງພຣະອົງຈະຕັ້ງຢູ່ ຊຶ່ງປະຊາຊາດທັງປວງ ຈະມາຫາໃນຍຸກສຸດທ້າຍ?" ໃນເວລາຕໍ່ມາເພິ່ນໄດ້ຮັບການເປີດເຜີຍນີ້.*

*1–3, ເມືອງອິນດີເພັນເດັນສ໌, ລັດມີເຊີຣີ, ເປັນສະຖານທີ່ສຳລັບເມືອງຊີໂອນ ແລະ ພຣະວິຫານ; 4–7, ໄພ່ພົນຂອງພຣະເຈົ້າ ຕ້ອງຊື້ທີ່ດິນ ແລະ ຮັບມູນມໍລະດົກໃນເຂດ ນັ້ນ; 8–16, ຊິດນີ ກຽວເບີດ ຕ້ອງຈັດຕັ້ງ ຮ້ານຄ້າ, ວິວລຽມ ດັບເບີນຢູ ແຟັວສ໌ ຕ້ອງ ເປັນຜູ້ພິມ, ແລະ ອໍລີເວີ ຄາວເດີຣີ ຕ້ອງແກ້ ໄຂຕົ້ນສະບັບເພື່ອພິມ.*

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າແອວເດີຂອງ
ສາດສະໜາຈັກຂອງເຮົາ, ພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຈົ້າໄດ້ກ່າວ,
ຜູ້ໄດ້ມາຮ່ວມຊຸມນຸມນຳກັນ, ຕາມບັນຍັດ
ຂອງເຮົາ, ໃນແຜ່ນດິນນີ້, ຊຶ່ງເປັນແຜ່ນດິນ
[ກ]ມີເຊີຣີ, ຊຶ່ງເປັນ [ຂ]ແຜ່ນດິນທີ່ເຮົາໄດ້ກຳ
ນົດ ແລະ [ຄ]ອຸທິດໄວ້ສຳລັບ [ງ]ການເຕົ້າໂຮມ
ຂອງໄພ່ພົນຂອງພຣະເຈົ້າ.
2 ດັ່ງນັ້ນ, ນີ້ຄືແຜ່ນດິນແຫ່ງຄຳສັນຍາ,
ແລະ [ກ]ສະຖານທີ່ສຳລັບເມືອງ [ຂ]ຊີໂອນ.
3 ແລະ ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າໄດ້ກ່າວດັ່ງນີ້, ຖ້າຫາກ
ພວກເຈົ້າຈະໄດ້ຮັບປັນຍາ ນີ້ຄືປັນຍາ. ຈົ່ງ
ເບິ່ງ, ບ່ອນຊຶ່ງຕອນນີ້ເອີ້ນວ່າເມືອງອິນດີ
ເພັນເດັນສ໌ ຄືສະຖານທີ່ສູນກາງ; ແລະ
ບ່ອນສຳລັບ [ກ]ພຣະວິຫານທີ່ຈະຕັ້ງຢູ່ ແມ່ນ
ຢູ່ທາງຕາເວັນຕົກ, ຊຶ່ງເປັນດິນຕອນທີ່ບໍ່ຢູ່
ໄກຈາກຕຶກສານ.
4 ດັ່ງ ນັ້ນ, ມັນ ເປັນ ຄວາມ ສະຫລຽວ
ສະຫລາດທີ່ຈະໃຫ້ໄພ່ພົນຂອງພຣະເຈົ້າ
[ກ]ຊື້ທີ່ດິນ, ແລະ ທີ່ດິນທຸກຕອນຢູ່ທາງຕາ
ເວັນຕົກນຳອີກ, ແມ່ນແຕ່ຈົນເຖິງເສັ້ນແບ່ງ
ເຂດລະຫວ່າງ [ຂ]ຊາວຢິວ ແລະ ຄົນຕ່າງ
ຊາດ;
5 ແລະ ທີ່ດິນທຸກຕອນທີ່ຢູ່ໃກ້ທົ່ງຫຍ້າ
ນຳອີກ, ຕາບໃດທີ່ສານຸສິດຂອງເຮົາ ສາ
ມາດ [ກ]ຊື້ທີ່ດິນເຫລົ່ານັ້ນ. ຈົ່ງເບິ່ງ, ນີ້ຄືປັນ
ຍາ, ເພື່ອພວກເຂົາຈະ [ຂ]ໄດ້ຮັບມັນເປັນມູນ
ມໍລະດົກອັນເປັນນິດ.

---

**57** 1 *ກ* ຄພ 52:42.
*ຂ* ຄພ 29:7–8; 45:64–66.
*ຄ* ຄພ 61:17.
*ງ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
2 *ກ* ຄພ 28:9; 42:9, 62.
*ຂ* ຄມພ ຊີໂອນ.
3 *ກ* ຄພ 58:57; 97:15–17.
4 *ກ* ຄພ 48:4.
*ຂ* ອສ *ຊາວຢິວ* ຢູ່ບ່ອນນີ້ໝາຍເຖິງ ຊາວເລມັນ, ແລະ *ຄົນຕ່າງຊາດ* ໝາຍເຖິງ ຄົນຜິວຂາວທີ່ມາຕັ້ງຖິ່ນຖານ.
5 *ກ* ຄພ 58:49, 51; 101:68–74.
*ຂ* ຄພ 56:20.

6 ແລະ ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ ຊິດນີ ກຽວເບີດ ຢູ່ໃນຕຳແໜ່ງຊຶ່ງ ເຮົາໄດ້ກຳນົດ ໃຫ້ລາວ, ເພື່ອຮັບ ເງິນ, ເພື່ອ [ກ]ເປັນຕົວ ແທນໃຫ້ແກ່ສາດສະໜາຈັກ, ເພື່ອຊື້ທີ່ດິນ ໃນພາກພື້ນຕ່າງໆທີ່ອ້ອມຮອບນັ້ນ, ຕາບ ໃດທີ່ສາມາດເຮັດໄດ້ໃນຄວາມຊອບທຳ, ແລະ ຕາມທີ່ປັນຍາຈະຊີ້ນຳ.

7 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ ພາດທຣິດ ຢູ່ໃນຕຳແໜ່ງຊຶ່ງເຮົາໄດ້ກຳນົດ ໃຫ້ລາວ, ແລະ [ຂ]ແບ່ງປັນ ມູນມໍລະດົກໃຫ້ ແກ່ໄພ່ພົນຂອງພຣະເຈົ້າ, ແມ່ນແຕ່ຕາມ ທີ່ເຮົາໄດ້ບັນຊາ; ແລະ ຄົນເຫລົ່ານັ້ນຜູ້ຊຶ່ງ ລາວໄດ້ກຳນົດໃຫ້ຊ່ວຍເຫລືອລາວນຳອີກ.

8 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ ແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບ ໃຊ້ຂອງເຮົາ ຊິດນີ ກຽວເບີດ ຕັ້ງຖິ່ນຖານຢູ່ ບ່ອນນີ້, ແລະ ຕັ້ງຮ້ານຄ້າ, ເພື່ອວ່າລາວຈະ ໄດ້ຂາຍສິນຄ້າໂດຍບໍ່ມີການສໍ້ໂກງ, ເພື່ອ ວ່າລາວ ຈະໄດ້ເງິນໄປຊື້ທີ່ດິນເພື່ອຜົນປະ ໂຫຍດຂອງໄພ່ພົນຂອງພຣະເຈົ້າ, ແລະ ເພື່ອວ່າລາວຈະໄດ້ສິ່ງໃດກໍຕາມທີ່ສານຸສິດ ອາດຕ້ອງການເພື່ອຊ່ວຍເຫລືອພວກເຂົາ ຕັ້ງຖິ່ນຖານຢູ່ໃນບ່ອນທີ່ເປັນມູນມໍລະດົກ ຂອງພວກເຂົາ.

9 ແລະ ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ ຊິດນີ ກຽວເບີດ ຂໍເອົາໃບອະນຸຍາດນຳອີກ—ຈົ່ງ ເບິ່ງ ນີ້ຄືປັນຍາ, ແລະ ຜູ້ໃດກໍຕາມທີ່ອ່ານ ກໍໃຫ້ເຂົາເຂົ້າໃຈ—ເພື່ອລາວຈະສົ່ງສິນຄ້າ ໃຫ້ຜູ້ຄົນນຳອີກ, ແມ່ນແຕ່ໂດຍຜູ້ທີ່ລາວ ປະສົງ ຊຶ່ງເປັນພະນັກງານທີ່ຈ້າງໃຫ້ມາ ຊ່ວຍເຫລືອລາວ;

10 ແລະ ຈັດຫາໃຫ້ໄພ່ພົນຂອງເຮົາດັ່ງ ນັ້ນ, ເພື່ອວ່າພຣະກິດຕິຄຸນຂອງເຮົາຈະ ຖືກສັ່ງສອນໃຫ້ແກ່ຄົນເຫລົ່ານັ້ນທີ່ນັ່ງຢູ່ໃນ [ກ]ຄວາມມືດ ແລະ ໃນພາກພື້ນ ແລະ [ຂ]ເງົາ ແຫ່ງຄວາມຕາຍ.

11 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ ແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບ ໃຊ້ຂອງເຮົາ [ກ]ວິວລຽມ ດັບເບິນຢູ ແຟ້ວສ໌ ຕັ້ງຖິ່ນຖານຢູ່ໃນບ່ອນນີ້, ແລະ ຕັ້ງໃຫ້ເປັນ [ຂ]ຜູ້ພິມໃຫ້ສາດສະໜາຈັກ.

12 ແລະ ເບິ່ງ ແມ, ຖ້າຫາກ ໂລກຮັບ ເອົາການຂຽນຂອງລາວ—ຈົ່ງເບິ່ງ ນີ້ຄືປັນ ຍາ—ໃຫ້ລາວໄດ້ສິ່ງໃດກໍຕາມທີ່ລາວສາ ມາດໄດ້ມາໃນຄວາມຊອບທຳ, ເພື່ອຜົນປະ ໂຫຍດຂອງໄພ່ພົນຂອງພຣະເຈົ້າ.

13 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ອໍລີເວີ ຄາວເດີຣີ ຊ່ວຍເຫລືອລາວ, ແມ່ນແຕ່ຕາມ ທີ່ເຮົາໄດ້ບັນຊາ, ໃນບ່ອນໃດກໍຕາມທີ່ເຮົາ ຈະກຳນົດໃຫ້ລາວ, ທີ່ຈະອັດສຳເນົາ, ແລະ ທີ່ຈະແກ້ໄຂ, ແລະ ເລືອກ, ເພື່ອວ່າທຸກສິ່ງ ຈະຖືກຕ້ອງຢູ່ຕໍ່ໜ້າເຮົາ, ຕາມທີ່ພຣະວິນ ຍານຈະພິສູດຜ່ານລາວ.

14 ແລະ ດັ່ງນັ້ນ ໃຫ້ຄົນເຫລົ່ານັ້ນທີ່ເຮົາ ກ່າວເຖິງຕັ້ງຖິ່ນຖານຢູ່ໃນແຜ່ນດິນຊີໂອນ, ໃຫ້ໄວເທົ່າທີ່ຈະສາມາດເຮັດໄດ້, ນຳຄອບ ຄົວຂອງພວກເຂົາ, ເພື່ອເຮັດສິ່ງເຫລົ່ານັ້ນ ແມ່ນແຕ່ເໝືອນດັ່ງທີ່ເຮົາໄດ້ກ່າວໄວ້.

15 ແລະ ບັດນີ້ ກ່ຽວກັບການເຕົ້າໂຮມ— ໃຫ້ອະທິການ ແລະ ຕົວແທນຕຽມພ້ອມສຳ ລັບຄອບຄົວເຫລົ່ານັ້ນ ຊຶ່ງຖືກບັນຊາໃຫ້ ມາຫາແຜ່ນດິນນີ້, ໃຫ້ໄວເທົ່າທີ່ຈະສາມາດ ເຮັດໄດ້, ແລະ ຕັ້ງຖິ່ນຖານຢູ່ໃນບ່ອນທີ່ ເປັນມູນມໍລະດົກຂອງພວກເຂົາ.

---

6 ກ ຄພ 53.
7 ກ ຄພ 58:24.
ຄມພ ພາດທຣິດ, ເອດເວີດ.
ຂ ຄພ 41:9–11; 58:14–18.
10 ກ ອຊຢ 9:2; ມທ 4:16.
ຄມພ ຄວາມມືດ ທາງວິນຍານ.
ຂ ພສສ 23:4.
11 ກ ຄມພ ແຟ້ວສ໌, ວິວລຽມ ດັບເບິນຢູ.
ຂ ຄພ 58:37, 40–41.
13 ກ ຄມພ ຄາວເດີຣີ, ອໍລີເວີ.

16 ແລະ ສຳລັບຜູ້ທີ່ເຫລືອຢູ່ທັງແອວເດີ
ແລະ ສະມາຊິກ ຈະ ໄດ້ ຮັບ ຄຳ ແນະນຳ
ເພີ່ມເຕີມໃນພາຍລັງ. ແມ່ນ ເປັນດັ່ງນັ້ນ.
ອາແມນ.

# ພາກທີ 58

*ການ ເປີດ ເຜີຍ ທີ່ມອບ ໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນຊີໂອນ, ເຂດ ແຈ໊ກສັນ, ລັດມີເຊີຣີ, ວັນທີ 1 ເດືອນສິງຫາ, 1831. ກ່ອນໜ້ານັ້ນ, ໃນວັນຊະບາໂຕທຳອິດຫລັງຈາກສາດສະດາ ແລະ ກຸ່ມຄະນະຂອງເພິ່ນໄດ້ມາເຖິງເຂດແຈ໊ກສັນ, ລັດມີເຊີຣີ, ພິທີທາງສາດສະໜາໄດ້ຖືກຈັດຂຶ້ນ, ແລະ ໄດ້ຮັບເອົາສະມາຊິກສອງຄົນໂດຍການຮັບບັບຕິສະມາ. ໃນລະຫວ່າງອາທິດນັ້ນ, ໄພ່ພົນຂອງພຣະເຈົ້າຂອງເມືອງໂຄນສະວຽວຈາກສາຂາທອມສັນ ແລະ ຄົນອື່ນໆໄດ້ມາເຖິງ (ເບິ່ງ ພາກທີ 54). ຫລາຍຄົນມີຄວາມກະຕືລືລົ້ນທີ່ຈະຮຽນຮູ້ເຖິງພຣະປະສົງຂອງພຣະຜູ້ເປັນເຈົ້າກ່ຽວກັບເຂົາເຈົ້າເອງຢູ່ໃນສະຖານທີ່ເຕົ້າໂຮມແຫ່ງໃໝ່.*

*1–5 ຜູ້ທີ່ອົດທົນຕໍ່ຄວາມທຸກຍາກລຳບາກຈະໄດ້ຮັບການສວມມົງກຸດດ້ວຍລັດສະໝີພາບ; 6–12, ໄພ່ພົນຂອງພຣະເຈົ້າຕ້ອງຕຽມຕົວສຳລັບງານສົມຣົດຂອງພຣະເມສານ້ອຍ ແລະ ອາຫານຄ່ຳຂອງພຣະຜູ້ເປັນເຈົ້າ; 13–18, ອະທິການເປັນຜູ້ຕັດສິນໃນອິດສະຣາເອນ; 19–23, ໄພ່ພົນຂອງພຣະເຈົ້າຕ້ອງເຊື່ອຟັງກົດໝາຍຂອງແຜ່ນດິນ; 24–29, ມະນຸດຄວນໃຊ້ອຳເພີໃຈຂອງຕົນເພື່ອເຮັດຄວາມດີ; 30–33, ພຣະຜູ້ເປັນເຈົ້າບັນຊາ ແລະ ຍົກເລີກ; 34–43, ໃນການກັບໃຈ, ມະນຸດຕ້ອງສາລະພາບ ແລະ ປະຖິ້ມບາບຂອງຕົນ; 44–58, ໄພ່ພົນຂອງພຣະເຈົ້າຕ້ອງຊື້ດິນໄວ້ເປັນມູນມໍລະດົກ ແລະ ເຕົ້າໂຮມກັນໃນລັດມີເຊີຣີ; 59–65, ຈະຕ້ອງສັ່ງສອນພຣະກິດຕິຄຸນໃຫ້ແກ່ມະນຸດສະໂລກທັງໝົດ.*

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າແອວເດີຂອງ
ສາດສະໜາຈັກຂອງເຮົາ, ແລະ ຈົ່ງງ່ຽງຫູ
ຟັງຖ້ອຍຄຳຂອງເຮົາ, ແລະ ຮຽນຮູ້ຈາກ
ເຮົາສິ່ງທີ່ເຮົາປະສົງຊຶ່ງກ່ຽວກັບພວກເຈົ້າ,
ແລະ ກ່ຽວກັບ [ກ]ແຜ່ນດິນນີ້ນຳອີກທີ່ເຮົາໄດ້
ສົ່ງພວກເຈົ້າມາ.
2 ເ ພາະ ຕາມ ຈິງ ແລ້ວ ເຮົາ ກ່າວ ກັບ
ພວກເຈົ້າວ່າ ຄົນທີ່ [ກ]ຮັກສາບັນຍັດຂອງ
ເຮົາຍ່ອມເປັນສຸກ, ບໍ່ວ່າໃນຊີວິດ ຫລື ໃນ
[ຂ]ຄວາມຕາຍ; ແລະ ຄົນໃດທີ່ [ຄ]ຊື່ສັດໃນ
[ງ]ຄວາມທຸກຍາກລຳບາກ, ລາງວັນຂອງ
ຄົນໆນັ້ນຈະຍິ່ງໃຫຍ່ກວ່າໃນອານາຈັກ
ສະຫວັນ.
3 ພວກເຈົ້າບໍ່ສາມາດຫລຽວເຫັນແຜນ
ການຂອງ [ກ]ພຣະເຈົ້າຂອງພວກເຈົ້າດ້ວຍ
ຕາທຳມະຊາດຂອງພວກເຈົ້າໃນເວລາ
ນີ້ກ່ຽວກັບສິ່ງທີ່ຈະເກີດຂຶ້ນໃນພາຍໜ້າ,
ແລະ [ຂ]ລັດສະໝີພາບທີ່ຈະຕາມມາຫລັງ
ຈາກຄວາມທຸກຍາກລຳບາກຢ່າງຫລວງ
ຫລາຍ.

**58** 1 *ກ* ຄພ 57:1–8.
2 *ກ* ມຊຢ 2:22.
*ຂ* 1 ປຕ 4:6.
*ຄ* 2 ທສນ 1:4.
*ງ* ຄມພ ຍາກລຳບາກ, ຄວາມຍາກລຳບາກ.
3 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* ຄມພ ລັດສະໝີພາບ.

4 ເພາະ [ກ]ພອນ ຈະ ມາ ເຖິງ ຫລັງ ຈາກ
[ຂ]ຄວາມທຸກຍາກລຳບາກຢ່າງຫລວງຫລາຍ.
ດັ່ງນັ້ນ ວັນນັ້ນຈະມາເຖິງເມື່ອພວກເຈົ້າຈະ
ໄດ້ [ຄ]ສວມມົງກຸດດ້ວຍ [ງ]ລັດສະໝີພາບອັນ
ໃຫຍ່ຍິ່ງ; ຍັງບໍ່ຮອດຊົ່ວໂມງນັ້ນເທື່ອ, ແຕ່ໃກ້
ຈະມາເຖິງແລ້ວ.
5 ຈົ່ງ ຈື່ ຈຳ ເລື່ອງ ນີ້, ຊຶ່ງ ເຮົາ ບອກ ພວກ
ເຈົ້າໄວ້ກ່ອນ, ເພື່ອພວກເຈົ້າຈະ [ກ]ເອົາໃຈ
ໃສ່, ແລະ ຮັບເອົາສິ່ງທີ່ຈະຕາມມາ.
6 ຈົ່ງ ເບິ່ງ, ຕາມ ຈິງ ແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ເພາະເຫດນີ້ເຮົາຈຶ່ງສົ່ງພວກ
ເຈົ້າ ມາ— ເພື່ອພວກເຈົ້າ ຈະໄດ້ເຊື່ອຟັງ,
ແລະ ເພື່ອວ່າໃຈຂອງພວກເຈົ້າຈະ [ກ]ຕຽມ
ພ້ອມທີ່ຈະສະແດງ [ຂ]ປະຈັກພະຍານເຖິງ
ສິ່ງທີ່ຈະມາເຖິງ;
7 ແລະ ພ້ອມນີ້ເພື່ອວ່າພວກເຈົ້າຈະໄດ້
ຮັບກຽດຈາກການວາງຮາກຖານ, ແລະ
ຈາກການກ່າວເປັນພະຍານເຖິງແຜ່ນດິນ
ຊຶ່ງເທິງທີ່ນັ້ນ [ກ]ຊີໂອນຂອງພຣະເຈົ້າຈະຕັ້ງ
ຢູ່;
8 ແລະ ເພື່ອ ຈະ ໄດ້ ຕຽມ ງານ ກິນ ລ້ຽງ
ໃຫຍ່ ດ້ວຍອາຫານທີ່ບໍລິບູນໄວ້ໃຫ້ຄົນ
[ກ]ຍາກຈົນນຳອີກ; ແທ້ ຈິງ ແລ້ວ, ງານກິນ
ລ້ຽງໃຫຍ່ດ້ວຍອາຫານທີ່ບໍລິບູນ, ດ້ວຍ
ເຫລົ້າອະງຸ່ນຈາກ [ຂ]ກາກທີ່ກັ່ນຕອງຢ່າງດີ,
ເພື່ອວ່າແຜ່ນດິນໂລກຈະຮູ້ວ່າຄຳເວົ້າຂອງ
ສາດສະດາຈະບໍ່ລົ້ມເຫລວ;
9 ແທ້ ຈິງ ແລ້ວ, ອາຫານຄ່ຳຂອງບ້ານ
ຂອງພຣະຜູ້ເປັນເຈົ້າ, ທີ່ຕຽມໄວ້ຢ່າງດີ, ຊຶ່ງ
ຄາບນັ້ນທຸກປະຊາຊາດຈະຖືກຮັບເຊີນ.
10 ທຳອິດ, ຄົນທີ່ຮັ່ງມີ ແລະ ຄົນທີ່ມີການ
ສຶກສາ, ຄົນທີ່ມີປັນຍາ ແລະ ຜູ້ມີກຽດ;
11 ແລະ ຫລັງຈາກນັ້ນ ວັນແຫ່ງອຳນາດ
ຂອງເຮົາຈະມາເຖິງ; ແລ້ວຄົນຍາກຈົນ,
ຄົນເປ້ຍລ່ອຍ, ແລະ ຄົນຕາບອດ, ແລະ
ຄົນຫູໜວກ, ຈະເຂົ້າມາໃນ [ກ]ງານສົມຣົດ
ຂອງພຣະເມສານ້ອຍ, ແລະ ຮັບສ່ວນ
[ຂ]ອາຫານຄ່ຳຂອງພຣະຜູ້ເປັນເຈົ້າ, ຊຶ່ງຖືກ
ຈັດຕຽມໄວ້ສຳລັບວັນອັນຍິ່ງໃຫຍ່ທີ່ຈະມາ
ເຖິງ.
12 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ກ່າວ
ມັນໄວ້ດັ່ງນີ້.
13 ແລະ ເພື່ອ ວ່າ [ກ]ປະຈັກ ພະຍານ ຈະ
ອອກ ໄປ ຈາກຊີໂອນ, ແທ້ຈິງ ແລ້ວ, ຈາກ
ປາກ ຂອງ ເມືອງມູນມໍລະດົກຂອງພຣະ
ເຈົ້າ—
14 ແທ້ຈິງແລ້ວ, ເພາະເຫດນີ້ເຮົາຈຶ່ງສົ່ງ
ພວກເຈົ້າມາທີ່ນີ້, ແລະ ໄດ້ເລືອກຜູ້ຮັບໃຊ້
ຂອງເຮົາ [ກ]ເອດເວີດ ພາດທຣິດ, ແລະ ໄດ້
ກຳນົດພາລະກິດຂອງລາວໃຫ້ແກ່ລາວໃນ
ແຜ່ນດິນນີ້.
15 ແຕ່ຖ້າລາວບໍ່ກັບໃຈຈາກບາບຂອງ
ລາວ, ຊຶ່ງຄືຄວາມບໍ່ເຊື່ອ ແລະ ຄວາມມືດ
ມົນຂອງໃຈ, ແລ້ວໃຫ້ລາວລະວັງ ຖ້າບໍ່ດັ່ງ
ນັ້ນລາວຈະ [ກ]ຕົກໄປ.
16 ຈົ່ງ ເບິ່ງພາລະກິດຂອງລາວ ໄດ້ຖືກ
ມອບໃຫ້ແກ່ລາວ, ແລະ ມັນຈະບໍ່ຖືກມອບ
ໃຫ້ອີກ.
17 ແລະ ຜູ້ໃດທີ່ປະຕິບັດຕາມພາລະ
ກິດນີ້ຈະຖືກແຕ່ງຕັ້ງໃຫ້ເປັນ [ກ]ຜູ້ຕັດສິນໃນ

4 *ກ* ຄມພ ພອນ, ໃຫ້ ພອນ, ເປັນພອນ.
*ຂ* ພສສ 30:5; ຄພ 101:2–7; 103:11–14; 109:76.
*ຄ* ຄມພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
*ງ* ຣມ 8:17–18; ຄພ 136:31.
5 *ກ* ພບຍ 11:18–19.
6 *ກ* ຄພ 29:8.
*ຂ* ຄມພ ປະຈັກພະຍານ.
7 *ກ* ຄມພ ຊີໂອນ.
8 *ກ* ຄມພ ຍາກຈົນ.
*ຂ* ອຊຢ 25:6.
11 *ກ* ມທ 22:1–14; ພນມ 19:9; ຄພ 65:3.
*ຂ* ລກ 14:16–24.
13 *ກ* ມກ 4:2.
14 *ກ* ຄມພ ພາດທຣິດ, ເອດເວີດ.
15 *ກ* 1 ກຣທ 10:12.
17 *ກ* ຄພ 107:72–74. ຄມພ ອະທິການ.

ອິດສະ ຣາເອນ, ເໝືອນ ທີ່ ເປັນ ມາ ໃນ ສະ
ໄໝບູຮານ, ເພື່ອແບ່ງແຜ່ນດິນມູນມໍລະດົກ
ຂອງພຣະເຈົ້າໃຫ້ແກ່ [ຂ]ລູກໆຂອງພຣະອົງ;
18 ແລະ ເພື່ອ ຕັດສິນຜູ້ຄົນຂອງພຣະ
ອົງ ໂດຍປະຈັກພະຍານ ຂອງຄົນ ທ່ຽງທຳ,
ແລະ ໂດຍຄວາມຊ່ວຍ ເຫລືອ ຂອງທີ່ປຶກ
ສາຂອງລາວ, ຕາມກົດຂອງອານາຈັກຊຶ່ງ
ໃຫ້ໄວ້ໂດຍ [ກ]ສາດສະດາຂອງພຣະເຈົ້າ.
19 ເພາະ ຕາມ ຈິງ ແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ຈົ່ງຮັກສາກົດຂອງເຮົາເທິງ
ແຜ່ນດິນນີ້.
20 ຢ່າໃຫ້ມະນຸດຄົນໃດຄິດວ່າຕົນເປັນ
ຜູ້ປົກຄອງ; ແຕ່ໃຫ້ພຣະເຈົ້າປົກຄອງຄົນທີ່
ຕັດສິນ, ຕາມການແນະນຳອັນທີ່ເປັນພຣະ
ປະສົງຂອງພຣະອົງເອງ, ຫລື ອີກຄຳໜຶ່ງ,
ຄົນທີ່ແນະນຳ ຫລື ທີ່ນັ່ງຢູ່ເທິງບັນລັງຕັດ
ສິນ.
21 ຢ່າ ໃຫ້ ມະນຸດ ຄົນ ໃດ ຝ່າ ຝືນ [ກ]ກົດ
ໝາຍຂອງແຜ່ນດິນ, ເພາະຄົນທີ່ຮັກສາກົດ
ຂອງພຣະເຈົ້າ ບໍ່ຈຳເປັນຕ້ອງຝ່າຝືນກົດ
ໝາຍຂອງແຜ່ນດິນ.
22 ດັ່ງນັ້ນ, ຈົ່ງຂຶ້ນຢູ່ກັບອຳນາດທີ່ດຳລົງ
ຢູ່, ຈົນກວ່າ [ກ]ພຣະອົງຈະປົກຄອງ ຜູ້ຊຶ່ງມີ
ສິດທີ່ຈະປົກຄອງ, ແລະ ປາບສັດຕູທັງສິ້ນ
ໃຫ້ຢູ່ໃຕ້ພຣະບາດຂອງພຣະອົງ.
23 ຈົ່ງເບິ່ງ, [ກ]ກົດທີ່ພວກເຈົ້າໄດ້ຮັບຈາກ
ມືຂອງເຮົາເປັນກົດຂອງສາດສະໜາຈັກ,
ແລະ ໃນທັດສະນະນີ້ ພວກເຈົ້າຈະຖືມັນ
ໄວ້. ຈົ່ງເບິ່ງ, ນີ້ຄືປັນຍາ.
24 ແລະ ບັດນີ້, ດັ່ງທີ່ເຮົາກ່າວກ່ຽວກັບ
ຜູ້ຮັບໃຊ້ຂອງເຮົາ ເອດເວີດ ພາດທຣິດ,
ແຜ່ນດິນນີ້ເປັນບ່ອນພັກພາອາໄສຂອງ
ລາວ, ແລະ ຄົນເຫລົ່ານັ້ນຜູ້ທີ່ລາວໄດ້ແຕ່ງ
ຕັ້ງໄວ້ເປັນທີ່ປຶກສາຂອງລາວ; ແລະ ເປັນ
ບ່ອນພັກພາອາໄສຂອງຜູ້ທີ່ເຮົາໄດ້ແຕ່ງຕັ້ງ
ໄວ້ໃຫ້ຮັກສາ [ກ]ຄັງຂອງເຮົານຳອີກ;
25 ດັ່ງນັ້ນ, ໃຫ້ພວກເຂົາພາຄອບຄົວ
ຂອງພວກເຂົາມາຍັງແຜ່ນດິນນີ້, ດັ່ງທີ່
ພວກເຂົາຈະປຶກສາລະຫວ່າງພວກເຂົາ
ເອງ ແລະ ກັບເຮົາ.
26 ເພາະຈົ່ງເບິ່ງ, ມັນບໍ່ສົມຄວນທີ່ເຮົາ
ຈະບັນຊາໃນທຸກສິ່ງ; ເພາະຄົນໃດທີ່ຖືກ
ບັງຄັບໃນທຸກສິ່ງ, ຄົນໆນັ້ນເປັນຜູ້ຮັບໃຊ້ທີ່
[ກ]ກຽດຄ້ານ ແລະ ບໍ່ສະຫລາດ; ດັ່ງນັ້ນ ເຂົາ
ຈຶ່ງບໍ່ໄດ້ຮັບລາງວັນເລີຍ.
27 ຕາມ ຈິງ ແລ້ວ ເຮົາກ່າວວ່າ ມະນຸດ
ຄວນທຸ້ມເທຢ່າງ [ກ]ກະຕືລືລົ້ນໃນອຸດົມການ
ດີ, ແລະ ເຮັດຫລາຍສິ່ງຫລາຍຢ່າງດ້ວຍ
ຄວາມສະໝັກໃຈຂອງຕົນເອງ, ແລະ ເຮັດ
ໃຫ້ເກີດຄວາມຊອບທຳຢ່າງຫລວງຫລາຍ;
28 ເພາະ ພະລັງຢູ່ໃນຕົວເຂົາ, ຊຶ່ງໃນ
ການນີ້ເຂົາ [ກ]ເປັນຕົວແທນອິດສະລະພາບ
ຂອງຕົນເອງ. ແລະ ຕາບໃດທີ່ມະນຸດເຮັດ
ຄວາມດີ ເຂົາຈະບໍ່ມີທາງສູນເສຍລາງວັນ
ຂອງຕົນໄປຈັກເທື່ອ.
29 ແຕ່ຄົນໃດທີ່ບໍ່ເຮັດຫຍັງເລີຍຈົນກວ່າ
ເຂົາຖືກບັນຊາໃຫ້ເຮັດ, ແລະ ຮັບເອົາຄຳ
ບັນຊາດ້ວຍໃຈທີ່ສົງໃສ, ແລະ ຮັກສາມັນ
ດ້ວຍຄວາມກຽດຄ້ານ, ຄົນໆນັ້ນຍ່ອມ [ກ]ອັບ
ປະໂຫຍດ.

17 *ຂ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
18 *ກ* ຄມພ ສາດສະດາ.
21 *ກ* ລກ 20:22–26; ຄພ 98:4–10; ຫຼຊ 1:12. ຄມພ ປົກຄອງ, ການປົກຄອງ.
22 *ກ* ຄມພ ພຣະເມຊີອາ; ພຣະເຢຊູຄຣິດ; ພັນປີ.
23 *ກ* ຄມພ ກົດ.
24 *ກ* ຄພ 51:13; 70:7–11.
26 *ກ* ມທ 24:45–51; ຄພ 107:99–100.
27 *ກ* ຄມພ ພາກພຽນ, ຄວາມພາກພຽນ; ວຽກງານ.
28 *ກ* ຄມພ ອຳເພີໃຈ.
29 *ກ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.

30 ເຮົາ ຄື ໃຜ ທີ່ [ກ]ສ້າງ ມະນຸດ, ພຣະ ຜູ້ ເປັນ ເຈົ້າ ໄດ້ກ່າວ, ວ່າ ເຮົາຈະຖືວ່າເຂົາບໍ່ ມີຄວາມຜິດບໍ ເມື່ອເຂົາບໍ່ເຊື່ອຟັງບັນຍັດ ຂອງເຮົາ?

31 ເຮົາຄືໃຜ, ພຣະຜູ້ເປັນເຈົ້າໄດ້ກ່າວ, ຊຶ່ງໄດ້ [ກ]ສັນຍາ ແລະ ຍັງບໍ່ໄດ້ເຮັດໃຫ້ສຳ ເລັດບໍ?

32 ເຮົາບັນຊາ ແລະ ມະນຸດບໍ່ເຊື່ອຟັງ; ເຮົາ [ກ]ຍົກເລີກ ແລະ ເຂົາບໍ່ໄດ້ຮັບພອນ.

33 ແລ້ວພວກເຂົາ ກ່າວຢູ່ໃນໃຈຂອງ ພວກເຂົາວ່າ: ນີ້ບໍ່ແມ່ນວຽກງານຂອງພຣະ ຜູ້ເປັນເຈົ້າ, ເພາະຄຳສັນຍາຂອງພຣະ ອົງບໍ່ໄດ້ສຳເລັດ. ແຕ່ວິບັດແກ່ຄົນເຫລົ່າ ນັ້ນ, ເພາະລາງວັນຂອງພວກເຂົາເຊື່ອງຢູ່ [ກ]ເບື້ອງລຸ່ມ, ແລະ ບໍ່ແມ່ນມາຈາກເບື້ອງເທິງ.

34 ແລະ ບັດນີ້ ເຮົາຈະໃຫ້ຄຳແນະນຳ ເພີ່ມເຕີມແກ່ພວກເຈົ້າກ່ຽວກັບແຜ່ນດິນນີ້.

35 ມັນເປັນຄວາມສະຫລຽວສະຫລາດ ຂອງເຮົາທີ່ຜູ້ຮັບໃຊ້ຂອງເຮົາ ມາຕິນ ແຮຣິສ ຄວນເປັນຕົວຢ່າງໃຫ້ແກ່ສາດສະ ໜາຈັກ, ໃນການ [ກ]ມອບເງິນຂອງລາວໃຫ້ ແກ່ອະທິການຂອງສາດສະໜາຈັກ.

36 ແລະ ພ້ອມນີ້, ນີ້ເປັນກົດສຳລັບມະ ນຸດທຸກຄົນທີ່ມາສູ່ແຜ່ນດິນນີ້ເພື່ອຈະຮັບ ເອົາມູນມໍລະດົກ; ແລະ ເຂົາຈະຈັດການ ກັບເງິນຂອງເຂົາຕາມທີ່ກົດລະບຸໄວ້.

37 ແລະ ມັນເປັນຄວາມສະຫລຽວ ສະຫລາດອີກທີ່ຈະຊື້ທີ່ດິນໃນອິນດີ ເພັນເດັນສ໌, ເພື່ອເປັນສະຖານທີ່ສ້າງຄັງ, ແລະ ສ້າງໂຮງ [ກ]ພິມນຳອີກ.

38 ແລະ ຄຳແນະນຳອື່ນໆກ່ຽວກັບຜູ້ຮັບ ໃຊ້ຂອງເຮົາ ມາຕິນ ແຮຣິສ ຈະມອບໃຫ້ ລາວໂດຍພຣະວິນຍານ, ເພື່ອວ່າລາວຈະ ໄດ້ຮັບມູນມໍລະດົກຂອງລາວ ດັ່ງທີ່ເຫັນວ່າ ດີສຳລັບລາວ;

39 ແລະ ໃຫ້ລາວກັບໃຈຈາກບາບຂອງ ລາວ, ເພາະລາວສະແຫວງຫາຄຳ [ກ]ສັນລະ ເສີນຂອງໂລກ.

40 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ວິວລຽມ ດັບເບິນຢູ ແຟ້ວສ໌ ຢູ່ໃນຕຳແໜ່ງທີ່ເຮົາໄດ້ ກຳນົດໃຫ້ລາວນຳອີກ, ແລະ ຮັບເອົາມູນມໍ ລະດົກຂອງລາວໃນທີ່ດິນ;

41 ແລະ ລາວ ຈຳເປັນຕ້ອງກັບໃຈນຳ ອີກ, ເພາະເຮົາ, ພຣະຜູ້ເປັນເຈົ້າ, ບໍ່ພໍໃຈ ນຳລາວປານໃດ, ເພາະລາວສະແຫວງຫາ ທີ່ຈະເກັ່ງກວ່າ, ແລະ ລາວບໍ່ອ່ອນໂຍນພຽງ ພໍຕໍ່ໜ້າເຮົາ.

42 ຈົ່ງ ເບິ່ງ, ຄົນ ໃດ ທີ່ [ກ]ກັບ ໃຈ ຈາກ ບາບຂອງເຂົາ, ຄົນໆນັ້ນໄດ້ຮັບການ [ຂ]ໃຫ້ ອະໄພ, ແລະ ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ [ຄ]ຈື່ ຈຳມັນອີກເລີຍ.

43 ໂດຍ ສິ່ງ ນີ້ ເຈົ້າ ຈະ ຮູ້ ວ່າ ຄົນໆ ນັ້ນ ໄດ້ກັບໃຈຈາກບາບຂອງເຂົາຫລືບໍ່—ຈົ່ງ ເບິ່ງ, ເຂົາຈະ [ກ]ສາລະພາບ ແລະ [ຂ]ປະຖິ້ມ ມັນ.

44 ແລະ ບັດນີ້, ຕາມຈິງແລ້ວ, ເຮົາກ່າວ ກ່ຽວກັບແອວເດີທີ່ເຫລືອຢູ່ຂອງສາດສະ ໜາຈັກຂອງເຮົາ, ຍັງບໍ່ເຖິງເວລາເທື່ອ, ຍັງ ອີກຫລາຍປີ, ທີ່ພວກເຂົາຈະໄດ້ຮັບມູນມໍ ລະດົກຂອງພວກເຂົາໃນແຜ່ນດິນນີ້, ຍົກ

30 *ກ* ອຊຢ 45:9–10; ຣລມ 12:6.
31 *ກ* ຄພ 1:37–38; 82:10.
32 *ກ* ຄພ 56:3–4.
33 *ກ* ຄພ 29:45.
35 *ກ* ຄພ 42:30–32.
37 *ກ* ຄພ 57:11–12.
39 *ກ* 2 ນຟ 26:29; ຄພ 121:34–37.
40 *ກ* ຄມພ ແຟ້ວສ໌, ວິວລຽມ ດັບເບິນຢູ.
42 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ອຊຢ 1:18. ຄມພ ອະໄພ, ໃຫ້ອະໄພ.
*ຄ* ອຊຢ 43:25.
43 *ກ* ຄພ 19:20; 64:7. ຄມພ ສາລະພາບ, ການສາລະພາບ.
*ຂ* ຄພ 82:7.

ເວັ້ນແຕ່ພວກເຂົາຈະປາດຖະໜາມັນໂດຍການອະທິຖານດ້ວຍສັດທາ, ແລະ ໂດຍທາງທີ່ພຣະຜູ້ເປັນເຈົ້າຈະກຳນົດມັນໃຫ້ແກ່ພວກເຂົາເທົ່ານັ້ນ.

45 ເພາະ, ຈົ່ງເບິ່ງ, ພວກເຂົາຈະ *ກ*ຊຸກຍູ້ຜູ້ຄົນເຂົ້າກັນຈາກທີ່ສຸດຂອງແຜ່ນດິນໂລກ.

46 ດັ່ງນັ້ນ, ຈົ່ງຮ່ວມຊຸມນຸມກັນ; ແລະ ຜູ້ທີ່ບໍ່ໄດ້ຖືກກຳນົດໃຫ້ຢູ່ໃນແຜ່ນດິນນີ້, ກໍໃຫ້ພວກເຂົາສັ່ງສອນພຣະກິດຕິຄຸນໃນພາກພື້ນຕ່າງໆທີ່ອ້ອມຮອບ; ແລະ ຫລັງຈາກນັ້ນ ໃຫ້ພວກເຂົາກັບຄືນສູ່ບ້ານເຮືອນຂອງຕົນ.

47 ໃຫ້ພວກເຂົາສັ່ງສອນໄປລະຫວ່າງທາງ, ແລະ *ກ*ສະແດງປະຈັກພະຍານເຖິງຄວາມຈິງໃນທຸກບ່ອນ, ແລະ ເອີ້ນຄົນຮັ່ງມີ, ຄົນຊັ້ນສູງ ແລະ ຄົນຊັ້ນຕ່ຳ, ແລະ ຄົນຍາກຈົນໃຫ້ກັບໃຈ.

48 ແລະ ໃຫ້ພວກເຂົາສ້າງໜ່ວຍຂອງ *ກ*ສາດສະໜາຈັກຂຶ້ນ, ຕາບໃດທີ່ຜູ້ອາໄສຂອງແຜ່ນດິນໂລກຈະກັບໃຈ.

49 ແລະ ໃຫ້ມີຕົວແທນຄົນໜຶ່ງທີ່ຖືກກຳນົດໂດຍສຽງຂອງສາດສະໜາຈັກ, ສຳລັບສາດສະໜາຈັກໃນລັດໂອໄຮໂອ, ເພື່ອຮັບເອົາເງິນໄປຊື້ທີ່ດິນໃນ *ກ*ຊີໂອນ.

50 ແລະ ເຮົາມອບບັນຍັດຂໍ້ໜຶ່ງໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ, ເພື່ອລາວຈະໄດ້ *ກ*ຂຽນລາຍລະອຽດກ່ຽວກັບແຜ່ນດິນຊີໂອນ, ແລະ ຄຳຖະແຫລງກ່ຽວກັບພຣະປະສົງຂອງພຣະເຈົ້າ, ດັ່ງທີ່ພຣະວິນຍານຈະເຮັດໃຫ້ມັນເປັນທີ່ຮູ້ຈັກແກ່ລາວ;

51 ແລະ ໃຫ້ສະແດງສານສະບັບໜຶ່ງ ແລະ ໃບສັ່ງຊື້ຕໍ່ທຸກໜ່ວຍໃນສາດສະໜາຈັກເພື່ອຈະໄດ້ເງິນ, ໃຫ້ມອບມັນໄວ້ໃນມືຂອງອະທິການດ້ວຍຕົວລາວເອງ ຫລື ໂດຍຕົວແທນ ດັ່ງທີ່ລາວເຫັນວ່າດີ ຫລື ດັ່ງທີ່ລາວຈະແນະນຳ, ເພື່ອຊື້ທີ່ດິນໄວ້ເປັນມູນມໍລະດົກໃຫ້ແກ່ລູກໆຂອງພຣະເຈົ້າ.

52 ເພາະ, ຈົ່ງເບິ່ງ, ຕາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ພຣະຜູ້ເປັນເຈົ້າປະສົງໃຫ້ສານຸສິດ ແລະ ລູກຫລານມະນຸດເປີດໃຈຂອງເຂົາ, ແມ່ນແຕ່ທີ່ຈະຊື້ພາກພື້ນແຖວນີ້ຂອງແຜ່ນດິນ, ໃຫ້ໄວເທົ່າທີ່ເວລາຈະອຳນວຍ.

53 ຈົ່ງເບິ່ງ, ນີ້ຄືປັນຍາ. ໃຫ້ພວກເຂົາເຮັດສິ່ງນີ້ ຖ້າບໍ່ດັ່ງນັ້ນພວກເຂົາຈະບໍ່ໄດ້ຮັບ *ກ*ມູນມໍລະດົກເລີຍ, ຍົກເວັ້ນແຕ່ຈະເປັນໄປໂດຍການນອງເລືອດ.

54 ແລະ ອີກເທື່ອໜຶ່ງ, ຕາບໃດທີ່ໄດ້ທີ່ດິນມາ, ກໍໃຫ້ມີຄົນງານທຸກປະເພດຖືກສົ່ງອອກມາຫາແຜ່ນດິນນີ້, ເພື່ອອອກແຮງງານໃຫ້ໄພ່ພົນຂອງພຣະເຈົ້າ.

55 ໃຫ້ສິ່ງເຫລົ່ານີ້ທັງໝົດເປັນໄປຕາມລະບຽບ; ແລະ ປະກາດສິດທິພິເສດຂອງແຜ່ນດິນໃຫ້ເປັນທີ່ຮູ້ຈັກເປັນບາງຄັ້ງ, ໂດຍອະທິການ ຫລື ຕົວແທນຂອງສາດສະໜາຈັກ.

56 ແລະ ຢ່າໃຫ້ວຽກງານຂອງການເຕົ້າໂຮມເປັນໄປຢ່າງຟ້າວຟັ່ງ, ຫລື ປົບໜີໄປ; ແຕ່ໃຫ້ມັນເປັນໄປຕາມຄຳແນະນຳຂອງພວກແອວເດີຂອງສາດສະໜາຈັກໃນກອງປະຊຸມໃຫຍ່, ຕາມຄວາມຮູ້ທີ່ເຂົາເຈົ້າໄດ້ຮັບເປັນບາງຄັ້ງ.

57 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກ

45 *ກ* ພບຍ 33:17.
ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
47 *ກ* ຄພ 68:8.
48 *ກ* ອສ ສາຂາຂອງສາດສະໜາຈັກ.
49 *ກ* ຄມພ ຊີໂອນ.
50 *ກ* ຄພ 63:55–56.
53 *ກ* ຄພ 63:27–31.

ດອນ ຖວາຍ ແລະ ອຸທິດແຜ່ນດິນນີ້, ແລະ
ບ່ອນສ້າງ [ກ]ພຣະວິຫານແດ່ພຣະຜູ້ເປັນ
ເຈົ້າ.
58 ແລະ ໃຫ້ຈັດກອງປະຊຸມໃຫຍ່ຂຶ້ນ,
ແລະ ຫລັງຈາກນັ້ນ ໃຫ້ຜູ້ຮັບໃຊ້ຂອງເຮົາ
ຊິດນີ ຣິກດອນ ແລະ ໂຈເຊັບ ສະມິດ,
ຜູ້ລູກ, ກັບໄປ, ແລະ ໃຫ້ອໍລິເວີ ຄາວເດີຣີ
ໄປນຳເຂົາເຈົ້າຄືກັນ, ເພື່ອເຮັດວຽກງານ
ທີ່ເຫລືອຢູ່ໃຫ້ສຳເລັດ ຊຶ່ງເຮົາໄດ້ກຳນົດ
ໄວ້ໃຫ້ເຂົາເຈົ້າຢູ່ໃນແຜ່ນດິນຂອງເຂົາເຈົ້າ
ເອງ, ແລະ ວຽກງານທີ່ເຫລືອຢູ່ຈະຖືກ [ກ]ຈັດ
ການຢູ່ໃນກອງປະຊຸມໃຫຍ່.
59 ແລະ ບໍ່ໃຫ້ຄົນໃດກັບໄປຈາກແຜ່ນ
ດິນນີ້ ຍົກເວັ້ນແຕ່ເຂົາຈະ [ກ]ເປັນພະຍານ
ໄປລະຫວ່າງທາງ, ເຖິງສິ່ງທີ່ເຂົາຮູ້ ແລະ
ເຊື່ອຢ່າງແນ່ນອນທີ່ສຸດ.
60 ໃຫ້ເອົາສິ່ງທີ່ມອບໃຫ້ແກ່ ຊີບາ ພີເຕີ
ສັນ ໄປຈາກລາວ; ແລະ ໃຫ້ລາວຢູ່ເປັນ
ສະມາຊິກຂອງສາດສະໜາຈັກ, ແລະ ເຮັດ
ວຽກດ້ວຍມືຂອງລາວເອງນຳບັນດາອ້າຍ
ນ້ອງ, ຈົນກວ່າລາວ ຖືກ [ກ]ຕີສອນຢ່າງພຽງ
ພໍສຳລັບບາບທັງໝົດຂອງລາວ; ເພາະ
ລາວບໍ່ໄດ້ສາລະພາບມັນ, ແລະ ລາວຄິດທີ່
ຈະປົກປິດມັນໄວ້.
61 ໃຫ້ແອວເດີທີ່ເຫລືອຢູ່ຂອງສາດສະ
ໜາຈັກນີ້, ຜູ້ພວມມາສູ່ແຜ່ນດິນນີ້, ຊຶ່ງບາງ
ຄົນໄດ້ຮັບພອນຢ່າງຫລວງຫລາຍ ເຖິງຂະ
ໜາດເກີນກວ່າທີ່ຈະວັດແທກໄດ້ ຈັດກອງ
ປະຊຸມໃຫຍ່ຢູ່ໃນແຜ່ນດິນນີ້ຄືກັນ.
62 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ເອດເວີດ
ພາດທຣິດ ຄວບຄຸມກອງປະຊຸມໃຫຍ່ ຊຶ່ງ
ພວກເຂົາຈະຈັດຂຶ້ນ.
63 ແລະ ໃຫ້ພວກເຂົາກັບຄືນໄປຄືກັນ,
ໂດຍສັ່ງສອນພຣະກິດຕິຄຸນໄປລະຫວ່າງ
ທາງ, ເປັນພະຍານເຖິງສິ່ງທີ່ເປີດເຜີຍແກ່
ພວກເຂົາ.
64 ເພາະ ຕາມ ຈິງ ແລ້ວ, ສຽງ ຈະ ຕ້ອງ
ອອກໄປ ຈາກບ່ອນນີ້ໄປທົ່ວໂລກ, ແລະ
ໄປຫາບ່ອນໄກສຸດຂອງແຜ່ນດິນໂລກ—
ຈະຕ້ອງ [ກ]ສັ່ງສອນພຣະກິດຕິຄຸນໃຫ້ແກ່
ມະນຸດສະ ໂລກທັງໝົດ, ດ້ວຍ [ຂ]ເຄື່ອງ
ໝາຍທີ່ຈະຕິດຕາມຄົນທີ່ເຊື່ອ.
65 ແລະ ຈົ່ງເບິ່ງ ບຸດມະນຸດຈະສະເດັດ
[ກ]ມາ. ອາແມນ.

# ພາກທີ 59

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນຊີໂອນ, ເຂດ ແຈ໊ກສັນ, ລັດມີເຊີຣີ, ວັນທີ 7 ເດືອນສິງຫາ, 1831. ກ່ອນບັນທຶກການເປີດເຜີຍນີ້, ແຜ່ນດິນໄດ້ຖືກອຸທິດຖວາຍ, ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ແນະນຳໄວ້, ແລະ ສະຖານທີ່ສຳລັບການສ້າງພຣະວິຫານໃນອະນາຄົດໄດ້ຖືກອຸທິດ. ໃນມື້ທີ່ໄດ້ຮັບການເປີດເຜີຍນີ້, ພໍລີ ໄນ້ ພັນລະຍາຂອງໂຈເຊັບ ໄນ້, ຜູ້ພໍ່, ໄດ້ເສຍຊີວິດໄປ, ເປັນສະມາຊິກຄົນທຳອິດ ທີ່ໄດ້ເສຍຊີວິດໃນຊີໂອນ. ສະມາຊິກໃນສະໄໝເລີ່ມຕົ້ນໄດ້ອະທິບາຍລັກສະນະຂອງການເປີດເຜີຍນີ້ວ່າເປັນ*

57 *ກ* ຄພ 57:3; 84:3–5, 31; 97:10–17.
58 *ກ* ຄມພ ເຫັນຊອບນຳກັນ.
59 *ກ* ຄມພ ປະຈັກພະຍານ.
60 *ກ* ຄມພ ຕີສອນ, ການຕີສອນ.
64 *ກ* ຄມພ ສັ່ງສອນ.
*ຂ* ຄມພ ເຄື່ອງໝາຍ.
65 *ກ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.

*"ຄຳແນະນຳແກ່ໄພ່ພົນຂອງພຣະເຈົ້າເຖິງວິທີຮັກສາວັນຊະບາໂຕ ແລະ ເຖິງວິທີຖືສິນອົດເຂົ້າ ແລະ ອະທິຖານ."*

*1–4, ໄພ່ພົນຂອງພຣະເຈົ້າທີ່ຊື່ສັດໃນຊີໂອນຈະໄດ້ຮັບພອນ; 5–8, ເຂົາເຈົ້າຕ້ອງຮັກ ແລະ ຮັບໃຊ້ພຣະຜູ້ເປັນເຈົ້າ ແລະ ຮັກສາພຣະບັນຍັດຂອງພຣະອົງ; 9–19, ໂດຍການຮັກສາວັນຂອງພຣະຜູ້ເປັນເຈົ້າໃຫ້ສັກສິດ, ໄພ່ພົນຂອງພຣະເຈົ້າໄດ້ຮັບພອນທາງຮ່າງກາຍ ແລະ ທາງວິນຍານ; 20–24, ຄົນຊອບທຳໄດ້ຮັບສັນຍາວ່າຈະມີສັນຕິສຸກຢູ່ໃນໂລກນີ້ ແລະ ຊີວິດນິລັນດອນຢູ່ໃນໂລກທີ່ຈະມາເຖິງ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວ, ຄົນ
ທີ່ຂຶ້ນມາຫາແຜ່ນດິນນີ້ເພາະການທີ່ [ກ]ເຫັນ
ແກ່ລັດສະໝີພາບຂອງເຮົາແຕ່ຢ່າງດຽວ,
ຕາມຄຳບັນຊາຂອງເຮົາ ຍ່ອມເປັນສຸກ.
2 ເພາະຄົນທີ່ມີຊີວິດຢູ່ຈະໄດ້ຮັບແຜ່ນ
ດິນໂລກເປັນ [ກ]ມູນມໍລະດົກ, ແລະ ຄົນທີ່
[ຂ]ຕາຍໄປແລ້ວ ຈະໄດ້ພັກຜ່ອນຈາກວຽກ
ງານທັງໝົດຂອງພວກເຂົາ, ແລະ ວຽກງານ
ຂອງພວກເຂົາຈະຕິດຕາມພວກເຂົາໄປ;
ແລະ ພວກເຂົາຈະໄດ້ຮັບ [ຄ]ມົງກຸດໃນ [ງ]ຜາ
ສາດຂອງພຣະບິດາຂອງເຮົາ, ຊຶ່ງເຮົາໄດ້
ຕຽມໄວ້ໃຫ້ພວກເຂົາແລ້ວ.
3 ແທ້ຈິງແລ້ວ, ຄົນທີ່ຕີນຂອງເຂົາຢືນຢູ່
ເທິງແຜ່ນດິນຊີໂອນ, ຜູ້ທີ່ເຊື່ອຟັງຕໍ່ພຣະ
ກິດຕິຄຸນຂອງເຮົາຍ່ອມເປັນສຸກ; ເພາະ
ເຂົາຈະໄດ້ຮັບສິ່ງທີ່ດີຂອງແຜ່ນດິນໂລກ
ເປັນລາງວັນ, ແລະ ມັນຈະນຳອອກມາ
[ກ]ດ້ວຍກຳລັງຂອງມັນ.
4 ແລະ ພວກເຂົາຈະໄດ້ຮັບການສວມ
ມົງກຸດດ້ວຍພອນຈາກເບື້ອງເທິງນຳອີກ,
ແທ້ຈິງແລ້ວ, ແລະ ດ້ວຍບັນຍັດທີ່ບໍ່ແມ່ນ
ໜ້ອຍ, ແລະ ດ້ວຍ [ກ]ການເປີດເຜີຍໃນ
ເວລາທີ່ເໝາະສົມຂອງມັນ—ເຂົາເຫລົ່າ
ນັ້ນທີ່ [ຂ]ຊື່ສັດ ແລະ [ຄ]ພາກພຽນຕໍ່ໜ້າເຮົາ.
5 ດັ່ງນັ້ນ, ເຮົາຈຶ່ງມອບບັນຍັດຂໍ້ໜຶ່ງໃຫ້
ແກ່ພວກເຂົາ, ໂດຍກ່າວດັ່ງນີ້: ຈົ່ງ [ກ]ຮັກ
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ
ດ້ວຍສຸດ [ຂ]ໃຈຂອງເຈົ້າ, ດ້ວຍສຸດພະລັງ,
ຄວາມຄິດ, ແລະ ກຳລັງຂອງເຈົ້າ; ແລະ
ໃນພຣະນາມຂອງພຣະເຢຊູຄຣິດ ໃຫ້ເຈົ້າ
[ຄ]ຮັບໃຊ້ພຣະອົງ.
6 ຈົ່ງຮັກ [ກ]ເພື່ອນມະນຸດເໝືອນຮັກຕົນ
ເອງ. ຢ່າ [ຂ]ລັກ; ທັງຢ່າ [ຄ]ຫລິ້ນຊູ້, ທັງຢ່າ
[ງ]ຂ້າຄົນ, ຫລື ເຮັດສິ່ງໃດໆທີ່ຄ້າຍຄືກັນ
ນັ້ນ.

**59** 1*ກ* ມທ 6:22–24; ຄພ 88:67.
2*ກ* ມທ 5:5; ຄພ 63:20, 48–49.
*ຂ* ພນມ 14:13. ຄມພ ຄວາມຕາຍທາງຮ່າງກາຍ; ທີ່ສຸຂະເສີມ.
*ຄ* ຄມພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
*ງ* ຢຮ 14:2; ຄພ 72:4; 76:111; 81:6; 98:18.
3*ກ* ປຖກ 4:12; ມຊ 5:37.
4*ກ* ຄພ 42:61; 76:7; 98:12; 121:26–29. ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ຄມພ ຄ່າຄວນ, ການມີຄ່າຄວນ.
*ຄ* ຄມພ ພາກພຽນ, ຄວາມພາກພຽນ.
5*ກ* ພບຍ 11:1; ມທ 22:37; ມຣມ 10:32; ຄພ 20:19. ຄມພ ຮັກ, ຄວາມຮັກ.
*ຂ* ຄມພ ໃຈ.
*ຄ* ຄມພ ຮັບໃຊ້, ການຮັບໃຊ້.
6*ກ* ຄມພ ຜູກມິດ.
*ຂ* ຄມພ ລັກ, ການລັກ.
*ຄ* ຄມພ ຫລິ້ນຊູ້.
*ງ* ຄມພ ຄາດຕະກຳ, ການຄາດຕະກຳ.

7 ຈົ່ງ [ກ]ຂອບພຣະໄທພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງເຈົ້າໃນທຸກສິ່ງ.
8 ຈົ່ງຖວາຍ [ກ]ເຄື່ອງບູຊາແດ່ພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງເຈົ້າໃນ [ຂ]ຄວາມ
ຊອບ ທຳ, ແມ່ນ ແຕ່ດ້ວຍ ໃຈທີ່ຊອກຊ້ຳ
ແລະ [ຄ]ວິນຍານທີ່ສຳນຶກຜິດ.
9 ແລະ ເພື່ອວ່າເຈົ້າຈະສາມາດຮັກສາ
ຕົນ ເອງ ໃຫ້ [ກ]ປາດ ສະຈາກ ມົນທິນ ຂອງ
ໂລກໄດ້ຫລາຍກວ່າເກົ່າ, ຈົ່ງໄປຍັງບ້ານ
ແຫ່ງການອະທິຖານ ແລະ ຖວາຍສິນລະ
ລຶກຂອງເຈົ້າໃນ [ຂ]ວັນສັກສິດຂອງເຮົາ;
10 ເພາະຕາມຈິງແລ້ວ ນີ້ຄືມື້ທີ່ກຳນົດໄວ້
ໃຫ້ເຈົ້າເພື່ອພັກຜ່ອນຈາກວຽກງານຂອງ
ເຈົ້າ, ແລະ ເພື່ອ [ກ]ສະແດງຄວາມຈົງຮັກພັກ
ດີແດ່ພຣະຜູ້ສູງສຸດ;
11 ເຖິງຢ່າງໃດກໍຕາມ ຈົ່ງຖວາຍຄຳປະ
ຕິຍານຂອງເຈົ້າໃນຄວາມຊອບທຳທຸກມື້
ແລະ ທຸກເວລາ;
12 ແຕ່ຈົ່ງຈື່ຈຳໄວ້ວ່າໃນມື້ນີ້, ວັນຂອງ
ພຣະຜູ້ເປັນເຈົ້າ, ຈົ່ງຖວາຍ [ກ]ເຄື່ອງບູຊາ
ຂອງເຈົ້າ ແລະ ສິນລະລຶກຂອງເຈົ້າແດ່
ພຣະຜູ້ສູງສຸດ, [ຂ]ສາລະພາບບາບຂອງເຈົ້າ
ຕໍ່ອ້າຍນ້ອງຂອງເຈົ້າ, ແລະ ຕໍ່ພຣະພັກ
ຂອງພຣະຜູ້ເປັນເຈົ້າ.
13 ແລະ ໃນມື້ນີ້ ຈົ່ງຢ່າເຮັດສິ່ງອື່ນ, ພຽງ
ແຕ່ໃຫ້ອາຫານຂອງເຈົ້າຖືກຈັດຕຽມດ້ວຍ
ໃຈທີ່ເຫັນແກ່ພຣະອົງເທົ່ານັ້ນ ເພື່ອວ່າ
ການ [ກ]ຖືສິນອົດເຂົ້າຂອງເຈົ້າຈະສົມບູນ,
ຫລື ອີກຄຳໜຶ່ງ, ເພື່ອ [ຂ]ຄວາມຊື່ນຊົມຂອງ
ເຈົ້າຈະເຕັມປ່ຽມ.
14 ຕາມຈິງແລ້ວ, ນີ້ເປັນການຖືສິນອົດ
ເຂົ້າ ແລະ ການອະທິຖານ, ຫລື ອີກຄຳໜຶ່ງ,
ການປິຕິຍິນດີ ແລະ ການອະທິຖານ.
15 ແລະ ຕາບໃດທີ່ເຈົ້າເຮັດສິ່ງເຫລົ່ານີ້
ດ້ວຍ [ກ]ຄວາມຂອບພຣະໄທ, ດ້ວຍ [ຂ]ໃຈ ແລະ
ໃບໜ້າ [ຄ]ທີ່ຊື່ນບານ, ບໍ່ແມ່ນ ດ້ວຍສຽງ [ງ]ຫົວ
ເຮຮາ, ເພາະນີ້ເປັນບາບ, ແຕ່ດ້ວຍຄວາມຍິນ
ດີໃນໃຈ ແລະ ໃບໜ້າທີ່ຊື່ນບານ—
16 ແທ້ຈິງແລ້ວ ເຮົາກ່າວວ່າ ຕາບໃດທີ່
ເຈົ້າເຮັດສິ່ງນີ້, ຄວາມສົມບູນຂອງແຜ່ນດິນ
ໂລກຈະເປັນຂອງເຈົ້າ, ສັດໃນທົ່ງ ແລະ
ນົກໃນອາກາດ, ແລະ ສິ່ງທີ່ໄຕ່ຂຶ້ນຕົ້ນໄມ້
ແລະ ຍ່າງຢູ່ເທິງແຜ່ນດິນໂລກ;
17 ແທ້ຈິງແລ້ວ, ແລະ ສະໝຸນໄພ, ແລະ
ສິ່ງທີ່ດີ ຊຶ່ງເກີດຈາກແຜ່ນດິນໂລກ, ບໍ່ວ່າ
ຈະເປັນເພື່ອອາຫານ ຫລື ເພື່ອເຄື່ອງນຸ່ງ
ຫົ່ມ, ຫລື ເພື່ອບ້ານເຮືອນ, ຫລື ເພື່ອເລົ້າ,
ຫລື ເພື່ອສວນໝາກໄມ້, ຫລື ເພື່ອສວນ
ຜັກ, ຫລື ເພື່ອສວນອະງຸ່ນ;
18 ແທ້ ຈິງ ແລ້ວ, ທຸກ ສິ່ງ ທີ່ ເກີດ ຈາກ
[ກ]ແຜ່ນດິນໂລກ, ໃນລະດູຂອງມັນ, ໄດ້ເກີດ
ຂຶ້ນເພື່ອເປັນປະໂຫຍດ ແລະ ເພື່ອການໃຊ້
ສອຍຂອງມະນຸດ, ທັງເພື່ອເປັນສິ່ງປະທັບ
ຕາ ແລະ ຍິນດີໃນໃຈນຳອີກ;

7 *ກ* ພສສ 92:1; ແອວ 37:37; ຄພ 46:32. ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
8 *ກ* ຄມພ ເສຍສະລະ, ການເສຍສະລະ.
*ຂ* ຄມພ ຊອບທຳ, ຄວາມຊອບທຳ.
*ຄ* ຄມພ ຫົວໃຈທີ່ຊອກຊ້ຳ.
9 *ກ* ຢກບ 1:27.
*ຂ* ຄມພ ວັນຊະບາໂຕ.
10 *ກ* ຄມພ ນະມັດສະການ.
12 *ກ* ອສ ການບໍລິຈາກ, ບໍ່ວ່າຈະເປັນເວລາ, ພອນສະຫວັນ, ຫລື ຊັບສິນ, ໃນການຮັບໃຊ້ພຣະເຈົ້າ ແລະ ເພື່ອນມະນຸດ. ຄມພ ເສຍສະລະ, ການເສຍສະລະ.
*ຂ* ຄມພ ສາລະພາບ, ການສາລະພາບ.
13 *ກ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
*ຂ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
15 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
*ຂ* ອພຍ 25:2; ຄພ 64:34.
*ຄ* ສພສ 17:22.
*ງ* ຄພ 88:69.
18 *ກ* ຄມພ ແຜ່ນດິນໂລກ.

19 ແທ້ຈິງແລ້ວ, ເພື່ອເປັນອາຫານ ແລະ
ເປັນເຄື່ອງນຸ່ງຫົ່ມ, ເພື່ອລົດຊາດ ແລະ ເພື່ອ
ກິ່ນ, ເພື່ອ ເພີ່ມກຳລັງ ໃຫ້ຮ່າງກາຍ ແລະ
ເພື່ອເຮັດໃຫ້ຈິດວິນຍານມີຊີວິດຊີວາ.
20 ແລະ ມັນເປັນສິ່ງພໍພຣະໄທຕໍ່ພຣະ
ເຈົ້າທີ່ພຣະອົງໄດ້ປະທານສິ່ງເຫລົ່ານີ້ທັງ
ໝົດໃຫ້ ແກ່ມະນຸດ; ເພາະທຸກສິ່ງ ໄດ້ຖືກ
ສ້າງຂຶ້ນເພື່ອໃຫ້ໃຊ້ສອຍ, ດ້ວຍການພິຈາ
ລະນາ, ບໍ່ໃຫ້ ເກີນຂອບເຂດ, ທັງບໍ່ ແມ່ນ
ໂດຍການຂົ່ມຂູ່ກັນ.
21 ແລະ ບໍ່ມີສິ່ງໃດທີ່ມະນຸດຈະເຮັດໃຫ້
ພຣະເຈົ້າ [ກ]ຂຸ່ນເຄືອງ, ຫລື ເຮັດໃຫ້ພຣະອົງ
ພຣະພິໂລດຕໍ່ຜູ້ໃດ, ຍົກເວັ້ນແຕ່ຜູ້ທີ່ [ຂ]ບໍ່ສາ
ລະພາບວ່າພຣະຫັດຂອງພຣະອົງຢູ່ໃນທຸກ
ສິ່ງທັງປວງ, ແລະ ບໍ່ເຊື່ອຟັງຕໍ່ພຣະບັນຍັດ
ຂອງພຣະອົງ.
22 ຈົ່ງ ເບິ່ງ, ນີ້ ເປັນ ໄປ ຕາມ ກົດ ແລະ
ຕາມສາດສະດາ; ດັ່ງນັ້ນ, ຢ່າລົບກວນເຮົາ
ອີກກ່ຽວກັບເລື່ອງນີ້.
23 ແຕ່ຈົ່ງຮຽນຮູ້ວ່າ ຄົນທີ່ເຮັດວຽກງານ
ແຫ່ງ [ກ]ຄວາມຊອບທຳຈະໄດ້ຮັບ [ຂ]ລາງວັນ
ຂອງເຂົາ, ແມ່ນແຕ່ [ຄ]ສັນຕິສຸກໃນໂລກນີ້,
ແລະ [ງ]ຊີວິດນິລັນດອນໃນ ໂລກທີ່ຈະມາ
ເຖິງ.
24 ເຮົາ, ພຣະຜູ້ເປັນ ເຈົ້າ, ກ່າວ ມັນ ໄວ້
ດັ່ງນີ້, ແລະ ພຣະວິນຍານໄດ້ເປັນພະຍານ.
ອາແມນ.

# ພາກທີ 60

*ການ ເປີດ ເຜີຍທີ່ມອບ ໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນເມືອງອິນດີເພັນເດັນສ໌, ເຂດແຈັກສັນ, ລັດມີເຊີຣີ, ວັນທີ 8 ເດືອນສິງຫາ, 1831. ໃນໂອກາດນີ້ພວກແອວເດີຜູ້ໄດ້ເດີນທາງໄປຫາເຂັດແຈັກສັນ ແລະ ໄດ້ມີສ່ວນຮ່ວມໃນການອຸທິດທີ່ດິນ ແລະ ສະຖານທີ່ສ້າງພຣະວິຫານ ມີຄວາມປາດຖະໜາຢາກຮູ້ວ່າ ເຂົາເຈົ້າຈະຕ້ອງເຮັດສິ່ງໃດ.*

*1–9, ແອວເດີຕ້ອງສັ່ງສອນພຣະກິດຕິຄຸນໃນບ່ອນຊຸມນຸມຂອງຄົນຊົ່ວ; 10–14, ເຂົາເຈົ້າບໍ່ຄວນປ່ອຍໃຫ້ເວລາຂອງເຂົາເຈົ້າເສຍໄປລ້າໆ, ຫລື ເຊື່ອງຊ້ອນພອນສະຫວັນຂອງຕົນ; 15–17, ເຂົາເຈົ້າອາດລ້າງຕີນຂອງຕົນ ເພື່ອເປັນປະຈັກພະຍານຕໍ່ຕ້ານຄົນທີ່ປະຕິເສດພຣະກິດຕິຄຸນ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ແອວເດີແຫ່ງສາດສະໜາຈັກຂອງພຣະອົງ,
ຜູ້ທີ່ຕ້ອງກັບໄປຢ່າງໄວຫາແຜ່ນດິນບ່ອນທີ່
ເຂົາເຈົ້າໄດ້ຈາກມາດັ່ງນີ້: ຈົ່ງເບິ່ງ, ມັນເຮັດ
ໃຫ້ເຮົາພໍໃຈຫລາຍທີ່ພວກເຈົ້າໄດ້ຂຶ້ນມາ
ບ່ອນນີ້;
2 ແຕ່ກັບບາງຄົນ ເຮົາບໍ່ພໍໃຈນຳຫລາຍ
ປານ ໃດ, ເພາະພວກເຂົາບໍ່ເປີດ [ກ]ປາກ,
ແຕ່ໄດ້ [ຂ]ເຊື່ອງຊ້ອນພອນສະຫວັນທີ່ເຮົາ
ໄດ້ມອບໃຫ້ພວກເຂົາ, ເພາະ [ຄ]ຄວາມຢ້ານ

21 *ກ* ຄມພ ຂຸ່ນເຄືອງໃຈ.
*ຂ* ໂຢບ 1:21.
23 *ກ* ຄມພ ຊອບທຳ, ຄວາມຊອບທຳ.
*ຂ* ຄມພ ພອນ, ໃຫ້ພອນ, ເປັນພອນ.
*ຄ* ມທ 11:28–30. ຄມພ ສະຫງົບ, ຄວາມສະຫງົບ.
*ງ* ຄພ 14:7.
**60** 2 *ກ* ອຟຊ 6:19–20.
*ຂ* ລກ 8:16, 18.
*ຄ* ມທ 25:14–30. ຄມພ ຢ້ານກົວ, ຄວາມຢ້ານກົວ—ຄວາມຢ້ານກົວມະນຸດ.

ກົວ ມະນຸດ. ວິບັດ ແກ່ ຄົນ ເຊັ່ນ ນັ້ນ, ເພາະ
ພຣະພິໂລດຂອງເຮົາໄດ້ເກີດກັບພວກເຂົາ
ແລ້ວ.
3 ແລະ ເຫດການຈະບັງເກີດຂຶ້ນຄື ຖ້າ
ຫາກພວກເຂົາບໍ່ຊື່ສັດຕໍ່ເຮົາຫລາຍກວ່ານີ້,
ແລ້ວ ມັນຈະ [ກ]ຖືກເອົາໄປຈາກພວກເຂົາ,
ແມ່ນແຕ່ສິ່ງຊຶ່ງພວກເຂົາມີ.
4 ເພາະເຮົາ, ພຣະຜູ້ເປັນເຈົ້າ, ປົກຄອງ
ຢູ່ໃນຟ້າສະຫວັນເບື້ອງເທິງ, ແລະ ທ່າມ
ກາງ [ກ]ກອງທັບຂອງແຜ່ນດິນໂລກ; ແລະ
ໃນວັນນັ້ນເມື່ອເຮົາຈະເລືອກເອົາ [ຂ]ເພັດ
ພອຍຂອງເຮົາ, ມະນຸດທັງປວງຈະຮູ້ວ່າສິ່ງ
ໃດທີ່ສະແດງໃຫ້ເຫັນອຳນາດຂອງພຣະ
ເຈົ້າ.
5 ແຕ່, ຕາມຄວາມຈິງແລ້ວ, ເຮົາຈະກ່າວ
ກັບພວກເຈົ້າກ່ຽວກັບການເດີນທາງຂອງ
ພວກເຈົ້າໄປຫາແຜ່ນດິນທີ່ພວກເຈົ້າໄດ້
ຈາກມາ. ໃຫ້ສ້າງເຮືອ, ຫລື ຊື້, ດັ່ງທີ່ພວກ
ເຈົ້າເຫັນວ່າດີ, ມັນບໍ່ສຳຄັນສຳລັບເຮົາ,
ແລະ ໃຫ້ອອກເດີນທາງຢ່າງໄວໄປຫາ
ບ່ອນທີ່ເອີ້ນວ່າ ເຊັ້ນຫລຸຍ.
6 ແລະ ຈາກບ່ອນນັ້ນ ໃຫ້ຜູ້ຮັບໃຊ້ຂອງ
ເຮົາ, ຊິດນີ ຣິກດອນ, ໂຈເຊັບ ສະມິດ,
ຜູ້ລູກ, ແລະ ອໍລີເວີ ຄາວເດີຣີ, ອອກເດີນ
ທາງໄປຫາເມືອງຊິນຊິນນາດີ;
7 ແລະ ໃນບ່ອນນີ້ ໃຫ້ເຂົາເຈົ້າເປັ່ງສຽງ
ຂອງຕົນ ແລະ ປະກາດຄຳຂອງເຮົາດ້ວຍ
ສຽງດັງ, ປາດສະຈາກຄວາມໂມໂຫ ຫລື
ຄວາມສົງໄສ, ໂດຍຍົກມືບໍລິສຸດຂຶ້ນເທິງ
ເຂົາ. ເພາະເຮົາສາມາດເຮັດໃຫ້ພວກເຈົ້າ
[ກ]ບໍລິສຸດ, ແລະ ບາບຂອງພວກເຈົ້າໄດ້ຖືກ
[ຂ]ອະໄພໃຫ້ແລ້ວ.
8 ແລະ ໃຫ້ຜູ້ທີ່ເຫລືອຢູ່ອອກເດີນທາງ
ຈາກເມືອງເຊັ້ນຫລຸຍ, ເປັນຄູ່ໆ, ແລະ ສັ່ງ
ສອນພຣະຄຳ, ບໍ່ແມ່ນດ້ວຍຄວາມຟ້າວຟັ່ງ,
ທ່າມກາງບ່ອນຊຸມນຸມຂອງຄົນຊົ່ວ, ຈົນກວ່າ
ພວກເຂົາໄດ້ກັບໄປເຖິງໜ່ວຍຂອງສາດສະ
ໜາຈັກບ່ອນທີ່ພວກເຂົາໄດ້ຈາກມາ.
9 ແລະ ທັງໝົດນີ້ເພາະຜົນປະໂຫຍດ
ຂອງໜ່ວຍຂອງສາດສະໜາຈັກ; ເພາະ
ດ້ວຍເຈດຕະນານີ້ ເຮົາຈຶ່ງໄດ້ສົ່ງພວກເຂົາ
ໄປ.
10 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ
ພາດທຣິດ ແບ່ງເງິນທີ່ເຮົາໄດ້ມອບໃຫ້ລາວ
ໃຫ້ແກ່ແອວເດີຜູ້ທີ່ເຮົາໄດ້ບັນຊາໃຫ້ກັບ
ໄປ;
11 ແລະ ຄົນໃດທີ່ສາມາດຈ່າຍຄືນ, ກໍ
ໃຫ້ຈ່າຍເງິນຄືນຜ່ານທາງຕົວແທນ; ແລະ
ຄົນໃດທີ່ບໍ່ສາມາດຈ່າຍຄືນ, ກໍບໍ່ຮຽກຮ້ອງ
ຈາກເຂົາ.
12 ແລະ ບັດນີ້ ເຮົາກ່າວເຖິງຜູ້ທີ່ເຫລືອຢູ່
ທີ່ຈະມາຫາແຜ່ນດິນນີ້.
13 ຈົ່ງເບິ່ງ, ພວກເຂົາໄດ້ຖືກສົ່ງໄປສັ່ງ
ສອນພຣະກິດຕິຄຸນຂອງເຮົາໃນທ່າມກາງ
ບ່ອນຊຸມນຸມຂອງຄົນຊົ່ວ; ດັ່ງນັ້ນ, ເຮົາ
ມອບບັນຍັດຂໍ້ໜຶ່ງໃຫ້ພວກເຂົາ, ດັ່ງນີ້:
ພວກເຈົ້າບໍ່ຄວນ [ກ]ປ່ອຍໃຫ້ [ຂ]ເວລາຂອງ
ພວກເຈົ້າເສຍໄປລ້າໆ, ທັງບໍ່ໃຫ້ເຊື່ອງ
ຊ້ອນພອນສະຫວັນຂອງພວກເຈົ້າໄວ້ ເພື່ອ
ວ່າມັນຈະບໍ່ໄດ້ເປັນທີ່ຮູ້ຈັກ.
14 ແລະ ຫລັງຈາກພວກເຈົ້າໄດ້ຂຶ້ນມາ
ຍັງແຜ່ນດິນຊີໂອນ, ແລະ ໄດ້ປະກາດຄຳ
ຂອງເຮົາ, ແລ້ວໃຫ້ພວກເຈົ້າກັບໄປຢ່າງ
ໄວ, ໂດຍປະກາດຄຳຂອງເຮົາໃນທ່າມ

3 *ກ* ມຣກ 4:25; ຄພ 1:33.
4 *ກ* ແອວ 43:50.
*ຂ* ອຊຢ 62:3; ຊກຢ 9:16; ມລກ 3:17; ຄພ 101:3.
7 *ກ* ຄມພ ສັກສິດ, ຄວາມສັກສິດ.
*ຂ* ຄມພ ອະໄພ, ໃຫ້ອະໄພ.
10 *ກ* ຄມພ ພາດທຣິດ, ເອດເວີດ.
13 *ກ* ຄພ 42:42. ຄມພ ກຽດຄ້ານ, ຄວາມກຽດຄ້ານ.
*ຂ* ມທ 25:24–30; ຄພ 82:18.

ກາງບ່ອນຊຸມນຸມຂອງຄົນຊົ່ວ, ບໍ່ແມ່ນດ້ວຍ
ຄວາມຟ້າວຟັ່ງ, ຫລື ດ້ວຍ [ກ]ຄວາມໂມໂຫ
ຫລື ດ້ວຍການຜິດຖຽງກັນ.
15 ແລະ ສັ່ນ [ກ]ຝຸ່ນດິນອອກຈາກຕີນ
ພວກເຈົ້າເພື່ອຕໍ່ຕ້ານຄົນທີ່ບໍ່ຮັບເອົາພວກ
ເຈົ້າ, ບໍ່ແມ່ນຢູ່ຕໍ່ໜ້າພວກເຂົາ, ຖ້າບໍ່ດັ່ງນັ້ນ
ພວກເຈົ້າຈະເຮັດໃຫ້ພວກເຂົາຂຸ່ນເຄືອງ
ໃຈ, ແຕ່ໃນບ່ອນລີ້ລັບ; ແລະ ລ້າງຕີນຂອງ
ພວກເຈົ້າ, ເພື່ອເປັນປະຈັກພະຍານຕໍ່ຕ້ານ
ພວກເຂົາໃນວັນແຫ່ງການພິພາກສາ.
16 ຈົ່ງເບິ່ງ, ສິ່ງນີ້ແມ່ນພຽງພໍສຳລັບພວກ
ເຈົ້າ, ແລະ ເປັນຕາມພຣະປະສົງຂອງຜູ້ທີ່
ສົ່ງພວກເຈົ້າໄປ.
17 ແລະ ໂດຍປາກຂອງຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ ສະມິດ, ຜູ້ລູກ, ມັນຈະເຮັດໃຫ້
ເປັນທີ່ຮູ້ຈັກກ່ຽວກັບຊິດນີ ຣິກດອນ ແລະ ອໍ
ລີເວີ ຄາວເດີຣີ. ສ່ວນທີ່ເຫລືອຢູ່ ໃນພາຍ
ຫລັງ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 61

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ແຄມຝັ່ງແມ່ນ້ຳມີເຊີຣີ, ທາງໂຄ້ງມັກອິວເວນ, ວັນທີ 12 ເດືອນສິງຫາ, 1831. ຕອນເຂົາເຈົ້າເດີນທາງກັບໄປເມືອງເຄີດແລນ, ສາດສະດາ ແລະ ແອວເດີສິບຄົນໄດ້ເດີນທາງລ່ອງແມ່ນ້ຳມີເຊີຣີໄປໃນເຮືອພາຍ. ໃນມື້ທີສາມຂອງການເດີນທາງ, ເຂົາເຈົ້າໄດ້ປະສົບອັນຕະລາຍຫລາຍຢ່າງ. ໃນພາບນິມິດໃນຕອນກາງເວັນ, ແອວເດີ ວິວລຽມ ດັບເບິນຢູ ແຟ້ວສ໌, ໄດ້ເຫັນຜູ້ທຳລາຍເດີນທະຍານໄປດ້ວຍອຳນາດຢູ່ເທິງພື້ນນ້ຳ.*

*1–12, ພຣະຜູ້ເປັນເຈົ້າໄດ້ອອກຄຳສັ່ງໃຫ້ເກີດຄວາມພິນາດຫລາຍຢ່າງຢູ່ເທິງພື້ນນ້ຳ; 13–22, ພື້ນນ້ຳຖືກໂຢຮັນສາບແຊ່ງ, ແລະ ຜູ້ທຳລາຍເດີນທະຍານໄປເທິງໜ້ານ້ຳ; 23–29, ບາງຄົນກໍມີອຳນາດບັນຊານ້ຳ; 30–35, ແອວເດີຕ້ອງເດີນທາງເປັນຄູ່ໆ ແລະ ສັ່ງສອນພຣະກິດຕິຄຸນ; 36–39, ເຂົາເຈົ້າຕ້ອງຕຽມສຳລັບການສະເດັດມາຂອງບຸດມະນຸດ.*

1 ຈົ່ງເບິ່ງ, ແລະ ຈົ່ງເຊື່ອຟັງສຸລະສຽງຂອງ
ພຣະອົງຜູ້ມີລິດ [ກ]ອຳນາດທັງປວງ, ຜູ້ຈາກ
ເປັນນິດເຖິງເປັນນິດ, ແມ່ນແຕ່ [ຂ]ອາລະຟາ
ແລະ ໂອເມຄາ, ເປັນຕົ້ນ ແລະ ທີ່ສຸດ.
2 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ພຣະຜູ້
ເປັນເຈົ້າໄດ້ກ່າວດັ່ງນີ້ກັບພວກເຈົ້າ, ໂອ້
ພວກເຈົ້າແອວເດີຂອງສາດສະໜາຈັກ
ຂອງເຮົາ, ຜູ້ມາຊຸມນຸມກັນໃນບ່ອນນີ້, ຜູ້ທີ່
ບາບຂອງພວກເຈົ້າໄດ້ຖືກອະໄພໃຫ້ແລ້ວ,
ເພາະເຮົາ, ພຣະຜູ້ເປັນເຈົ້າ, ໃຫ້ [ກ]ອະໄພ
ບາບ, ແລະ ມີ [ຂ]ເມດຕາແກ່ຜູ້ [ຄ]ສາລະພາບ
ບາບຂອງຕົນດ້ວຍຫົວໃຈທີ່ຖ່ອມ;

14 *ກ* ສພສ 14:29.
15 *ກ* ມທ 10:14; ລກ 9:5; ກຈກ 13:51; ຄພ 24:15; 75:20; 84:92.
**61** 1 *ກ* ຄມພ ອຳນາດ.
*ຂ* ຄມພ ອາລະຟາ ແລະ ໂອເມຄາ.
2 *ກ* ມຊຢ 4:10–11. ຄມພ ອະໄພ, ໃຫ້ອະໄພ.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
*ຄ* ຄມພ ສາລະພາບ, ການສາລະພາບ.

3 ແຕ່ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ບໍ່ຈຳເປັນທີ່ແອວເດີຂອງເຮົາ
ທັງກຸ່ມຈະເດີນທາງໄປຢ່າງໄວເທິງຜືນນ້ຳ,
ໃນຂະນະທີ່ຜູ້ອາໄສຢູ່ທັງສອງຝັ່ງພວມ
ຕາຍຢູ່ໃນຄວາມບໍ່ເຊື່ອຖື.
4 ເຖິງຢ່າງໃດກໍຕາມ, ເຮົາກໍຍອມເພື່ອ
ພວກເຈົ້າຈະໄດ້ກ່າວເປັນພະຍານ; ຈົ່ງ
ເບິ່ງ, ມີອັນຕະລາຍຫລາຍຢ່າງຢູ່ເທິງຜືນ
ນ້ຳ, ແລະ ຫລາຍຂຶ້ນໂດຍສະເພາະຫລັງ
ຈາກນີ້;
5 ເພາະເຮົາ, ພຣະຜູ້ເປັນເຈົ້າ, ໄດ້ອອກ
ຄຳສັ່ງໄວ້ໃນພຣະພິໂລດຂອງເຮົາໃຫ້ເກີດ
ຄວາມພິນາດຫລາຍຢ່າງຢູ່ເທິງຜືນນ້ຳ; ແທ້
ຈິງແລ້ວ, ແລະ ໂດຍສະເພາະເທິງຜືນນ້ຳ
ນີ້.
6 ເຖິງຢ່າງໃດກໍຕາມ, ເນື້ອໜັງທັງປວງຢູ່
ໃນມືຂອງເຮົາ, ແລະ ຄົນທີ່ຊື່ສັດໃນບັນດາ
ພວກເຈົ້າຈະບໍ່ຕາຍທາງຜືນນ້ຳ.
7 ດັ່ງນັ້ນ, ມັນຈຶ່ງຈຳເປັນທີ່ຜູ້ຮັບໃຊ້ຂອງ
ເຮົາ ຊິດນີ ກຽວເບີດ ແລະ ຜູ້ຮັບໃຊ້ຂອງ
ເຮົາ [ກ]ວິວລຽມ ດັບເບິນ ຢູ ແຟ້ວສ໌ ຕ້ອງ
ຟ້າວຟັ່ງໄປເຮັດທຸລະ ແລະ ພາລະກິດຂອງ
ພວກເຂົາ.
8 ເຖິງຢ່າງໃດກໍຕາມ, ເຮົາຈະບໍ່ຍອມໃຫ້
ພວກເຈົ້າຈາກກັນໄປຈົນກວ່າພວກເຈົ້າໄດ້
ຮັບ [ກ]ການຕີສອນສຳລັບບາບຂອງພວກ
ເຈົ້າເສຍກ່ອນ, ເພື່ອວ່າພວກເຈົ້າຈະໄດ້
ເປັນອັນໜຶ່ງດຽວກັນ, ເພື່ອວ່າພວກເຈົ້າຈະ
ບໍ່ຕາຍໃນ [ຂ]ຄວາມຊົ່ວຮ້າຍ;
9 ແຕ່ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວວ່າ ເຮົາເຫັນສົມຄວນທີ່ພວກເຈົ້າ
ຈະຈາກກັນໄປ. ດັ່ງນັ້ນ ໃຫ້ ຜູ້ຮັບໃຊ້ຂອງ
ເຮົາ ຊິດນີ ກຽວເບີດ ແລະ ວິວລຽມ ດັບ
ເບິນຢູ ແຟ້ວສ໌ ຮັບກຸ່ມເດີມຂອງພວກເຂົາ
ໄປ, ແລະ ໃຫ້ພວກເຂົາອອກເດີນທາງໃນ
ຄວາມຟ້າວຟັ່ງ ເພື່ອວ່າພວກເຂົາຈະໄດ້
ບັນລຸພາລະກິດຂອງພວກເຂົາ, ແລະ ຜ່ານ
ສັດທາ, ພວກເຂົາຈະຊະນະ;
10 ແລະ ຕາບໃດທີ່ພວກເຂົາຍັງຊື່ສັດ
ພວກເຂົາຈະຖືກຮັກສາໄວ້, ແລະ ເຮົາ,
ພຣະຜູ້ເປັນເຈົ້າ, ຈະສະຖິດຢູ່ນຳພວກເຂົາ.
11 ແລະ ໃຫ້ຜູ້ທີ່ເຫລືອຢູ່ເອົາສິ່ງທີ່ຈຳ
ເປັນສຳລັບການນຸ່ງຖືໄປນຳ.
12 ໃຫ້ຜູ້ຮັບໃຊ້ຂອງເຮົາ ຊິດນີ ກຽວເບີດ
ເອົາສິ່ງທີ່ບໍ່ຈຳເປັນໄປນຳລາວ, ດັ່ງທີ່ພວກ
ເຈົ້າເຫັນພ້ອມ.
13 ແລະ ບັດນີ້, ຈົ່ງເບິ່ງ, ເພື່ອ [ກ]ຜົນປະ
ໂຫຍດຂອງພວກເຈົ້າ ເຮົາຈະມອບ [ຂ]ບັນ
ຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າກ່ຽວກັບເລື່ອງ
ເຫລົ່ານີ້; ແລະ ເຮົາ, ພຣະຜູ້ເປັນເຈົ້າ, ຈະ
ໃຫ້ເຫດຜົນກັບພວກເຈົ້າ ດັ່ງເຊັ່ນກັບຜູ້ຄົນ
ໃນສະໄໝບູຮານ.
14 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ໃນ
ຕອນຕົ້ນໄດ້ອວຍພອນ [ກ]ຜືນນ້ຳ; ແຕ່ໃນ
ຍຸກສຸດທ້າຍ, ໂດຍປາກຂອງໂຢຮັນຜູ້ຮັບ
ໃຊ້ຂອງເຮົາ, ເຮົາໄດ້ [ຂ]ສາບແຊ່ງຜືນນ້ຳ.
15 ດັ່ງນັ້ນ, ວັນເວລາຈະມາເຖິງ ເມື່ອບໍ່ມີ
ເນື້ອໜັງໃດຈະປອດໄພຢູ່ເທິງຜືນນ້ຳ.
16 ແລະ ຈະມີກ່າວໄວ້ໃນວັນເວລາຈະ
ມາເຖິງວ່າ ບໍ່ມີໃຜສາມາດຂຶ້ນໄປຫາແຜ່ນ
ດິນຊີໂອນເທິງຜືນນ້ຳ, ຍົກເວັ້ນແຕ່ຄົນທີ່ຊື່
ຕົງໃນໃຈເທົ່ານັ້ນ.
17 ແລະ, ດັ່ງທີ່ເຮົາ, ພຣະຜູ້ເປັນເຈົ້າ, ໃນ
ຕອນຕົ້ນໄດ້ [ກ]ສາບແຊ່ງແຜ່ນດິນສັນໃດ,

7 *ກ* ຄມພ ແຟ້ວສ໌, ວິວລຽມ ດັບເບິນຢູ.
8 *ກ* ຄມພ ຕີສອນ, ການຕີສອນ.
*ຂ* ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
13 *ກ* ຄພ 21:6.
*ຂ* ຄມພ ພຣະບັນຍັດຂອງພຣະເຈົ້າ.
14 *ກ* ປຖກ 1:20.
*ຂ* ພນມ 8:8–11.
17 *ກ* ມຊ 4:23.

ເຮົາກໍຈະໃຫ້ພອນມັນໃນຍຸກສຸດທ້າຍສັນ
ນັ້ນ, ໃນເວລາຂອງມັນເອງ, ເພື່ອຜົນປະ
ໂຫຍດຂອງໄພ່ພົນຂອງເຮົາ, ເພື່ອວ່າເຂົາ
ຈະໄດ້ຮັບສ່ວນອັນອຸດົມສົມບູນໃນນັ້ນ.

18 ແລະ ບັດນີ້ ເຮົາມອບບັນຍັດຂໍ້ໜຶ່ງ
ໃຫ້ແກ່ພວກເຈົ້າວ່າ ສິ່ງໃດກໍຕາມທີ່ເຮົາ
ກ່າວກັບຄົນໜຶ່ງ ກໍຄືກັນກັບເຮົາກ່າວກັບ
ທຸກຄົນ, ເພື່ອວ່າພວກເຈົ້າຈະໄດ້ເຕືອນ
ອ້າຍນ້ອງຂອງພວກເຈົ້າກ່ຽວກັບຜືນນ້ຳ
ເຫລົ່ານີ້, ເພື່ອວ່າພວກເຂົາຈະບໍ່ໄດ້ມາເດີນ
ທາງໃນນ້ຳນີ້, ຖ້າບໍ່ດັ່ງນັ້ນພວກເຂົາຈະສູນ
ເສຍສັດທາໄປ ແລະ ຖືກບ້ວງ;

19 ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ອອກຄຳ
ສັ່ງ, ແລະ ຜູ້ທຳລາຍເດີນທະຍານໄປເທິງ
ໜ້ານ້ຳນັ້ນ, ແລະ ເຮົາບໍ່ໄດ້ຍົກເລີກຄຳສັ່ງ.

20 ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ພຣະພິ
ໂລດກັບພວກເຈົ້າມື້ວານນີ້, ແຕ່ມື້ນີ້ພຣະພິ
ໂລດຂອງເຮົາໄດ້ຫາຍໄປແລ້ວ.

21 ດັ່ງນັ້ນ, ໃຫ້ຄົນທີ່ເຮົາໄດ້ກ່າວເຖິງ,
ອອກເດີນທາງໃນຄວາມຟ້າວຟັ່ງ—ອີກ
ເທື່ອໜຶ່ງ ເຮົາກ່າວກັບພວກເຈົ້າອີກວ່າ ໃຫ້
ພວກເຂົາອອກເດີນທາງໃນຄວາມຟ້າວ
ຟັ່ງ.

22 ແລະ ມັນບໍ່ສຳຄັນສຳລັບເຮົາ, ຫລັງ
ຈາກບໍ່ດົນ, ຖ້າເປັນໄປວ່າ ພວກເຂົາໄດ້
ບັນລຸພາລະກິດຂອງພວກເຂົາ, ບໍ່ວ່າພວກ
ເຂົາຈະເດີນທາງໄປທາງນ້ຳ ຫລື ທາງບົກ;
ໃຫ້ສິ່ງນີ້ເປັນໄປດັ່ງທີ່ມັນຖືກເຮັດໃຫ້ເປັນ
ທີ່ຮູ້ຈັກແກ່ພວກເຂົາຕາມການພິຈາລະນາ
ຂອງພວກເຂົາໃນພາຍໜ້າ.

23 ແລະ ບັດນີ້, ກ່ຽວກັບຜູ້ຮັບໃຊ້ຂອງ
ເຮົາ, ຊິດນີ ຣິກດອນ, ໂຈເຊັບ ສະມິດ,
ຜູ້ລູກ, ແລະ ອໍລີເວີ ຄາວເດີຣີ, ຢ່າໃຫ້ເຂົາ
ເຈົ້າມາຕາມຜືນນ້ຳອີກ, ຍົກເວັ້ນແຕ່ຕາມ
ຕະຄອງ, ໃນຂະນະທີ່ເດີນທາງກັບໄປຫາ
ບ້ານເຮືອນຂອງເຂົາເຈົ້າ; ຫລື ອີກຄຳໜຶ່ງ
ເຂົາເຈົ້າຕ້ອງບໍ່ເດີນທາງມາຕາມຜືນນ້ຳ,
ຍົກເວັ້ນແຕ່ຕາມຕະຄອງເທົ່ານັ້ນ.

24 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ໄດ້
ກຳນົດເສັ້ນທາງສຳລັບການເດີນທາງຂອງ
ໄພ່ພົນຂອງເຮົາ; ແລະ ຈົ່ງເບິ່ງ, ນີ້ຄືເສັ້ນ
ທາງ—ວ່າຫລັງຈາກເຂົາເຈົ້າໄດ້ຂຶ້ນຕະ
ຄອງໄປ ແລ້ວເຂົາເຈົ້າຈະເດີນໄປທາງບົກ,
ຕາບໃດທີ່ເຂົາເຈົ້າຖືກບັນຊາໃຫ້ເດີນທາງ
ແລະ ຂຶ້ນໄປຫາແຜ່ນດິນຊີໂອນ;

25 ແລະ ເຂົາເຈົ້າຈະເຮັດຄືກັນກັບລູກ
ຫລານຂອງອິດສະຣາເອນ, [ກ]ຕັ້ງຜ້າເຕັ້ນ
ຂອງພວກເຂົາຕາມລະຫວ່າງທາງ.

26 ແລະ, ຈົ່ງເບິ່ງ, ພວກເຈົ້າຈະຕ້ອງ
ມອບບັນຍັດຂໍ້ນີ້ໃຫ້ແກ່ອ້າຍນ້ອງຂອງ
ພວກເຈົ້າທຸກຄົນ.

27 ເຖິງຢ່າງໃດກໍຕາມ, ກັບຜູ້ທີ່ໄດ້ຮັບ
[ກ]ອຳນາດໃຫ້ບັນຊາຜືນນ້ຳ, ຜູ້ນັ້ນຈະໄດ້
ຮັບພຣະວິນຍານໃຫ້ຮູ້ວິທີທາງຂອງພຣະ
ອົງ;

28 ດັ່ງນັ້ນ, ໃຫ້ລາວເຮັດດັ່ງທີ່ພຣະວິນ
ຍານຂອງພຣະເຈົ້າທີ່ຊົງພຣະຊົນຢູ່ຈະບັນ
ຊາລາວ, ບໍ່ວ່າຈະເປັນເທິງແຜ່ນດິນ ຫລື
ເທິງຜືນນ້ຳ, ດັ່ງທີ່ມັນຢູ່ກັບເຮົາທີ່ຈະເຮັດ
ໃນພາຍຂ້າງໜ້າ.

29 ແລະ ແກ່ພວກເຈົ້າ ວິທີທາງໄດ້ຖືກ
ມອບໃຫ້ສຳລັບໄພ່ພົນຂອງພຣະເຈົ້າ, ຫລື
ເສັ້ນທາງສຳລັບໄພ່ພົນຂອງຄ້າຍຂອງ
ພຣະຜູ້ເປັນເຈົ້າ, ເພື່ອເດີນທາງ.

30 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າ, ຜູ້ຮັບໃຊ້ຂອງ
ເຮົາວ່າ ຊິດນີ ຣິກດອນ, ໂຈເຊັບ ສະມິດ,
ຜູ້ລູກ, ແລະ ອໍລີເວີ ຄາວເດີຣີ, ຈະບໍ່ເປີດ

25*ກ* ຈບຊ 9:18.
27*ກ* ຄມພ ຖານະປະໂລຫິດ; ອຳນາດ.

ປາກຂອງເຂົາເຈົ້າໃນບ່ອນຊຸມນຸມຂອງຄົນ
ຊົ່ວ ຈົນກວ່າເຂົາເຈົ້າຈະໄປເຖິງເມືອງຊີນ
ຊີນນາດີ;

31 ແລະ ໃນບ່ອນນັ້ນ ເຂົາເຈົ້າຈະເປັ່ງ
ສຽງຂອງຕົນເຖິງພຣະເຈົ້າຕ້ານຜູ້ຄົນເຫລົ່າ
ນັ້ນ, ແທ້ຈິງແລ້ວ, ເຖິງພຣະອົງທີ່ພຣະພິ
ໂລດຕ້ານຄວາມຊົ່ວຮ້າຍຂອງພວກເຂົາ,
ຜູ້ຄົນທີ່ເກືອບຈະ [ກ]ສຸກງອມສຳລັບຄວາມ
ພິນາດ.

32 ແລະ ຈາກບ່ອນນັ້ນໃຫ້ເຂົາເຈົ້າເດີນ
ທາງ ໄປ ຫາບ່ອນຊຸມນຸມຂອງອ້າຍນ້ອງ
ຂອງເຂົາເຈົ້າ, ເພາະວຽກງານຂອງເຂົາເຈົ້າ
ແມ່ນແຕ່ຕອນນີ້ກໍເປັນທີ່ຕ້ອງການໃນບັນ
ດາພວກເຂົາຫລາຍກວ່າໃນບັນດາບ່ອນ
ຊຸມນຸມຂອງຄົນຊົ່ວ.

33 ແລະ ບັດນີ້, ກ່ຽວກັບຜູ້ທີ່ເຫລືອຢູ່, ໃຫ້
ພວກເຂົາເດີນທາງ ແລະ [ກ]ປະກາດພຣະ
ຄຳ ໃນບັນດາບ່ອນຊຸມນຸມຂອງຄົນຊົ່ວ,
ເທົ່າທີ່ມັນຖືກມອບໃຫ້;

34 ແລະ ຕາບໃດທີ່ພວກເຂົາເຮັດສິ່ງ
ນີ້ ພວກເຂົາຈະ [ກ]ກຳຈັດຄວາມດ່າງພ້ອຍ
ອອກຈາກອາພອນຂອງພວກເຂົາ, ແລະ
ພວກເຂົາຈະບໍ່ມີມົນທິນຢູ່ຕໍ່ໜ້າເຮົາ.

35 ແລະ ໃຫ້ພວກເຂົາເດີນທາງໄປນຳ
ກັນ, ຫລື ເປັນ [ກ]ຄູ່ໆ, ດັ່ງທີ່ພວກເຂົາເຫັນ
ວ່າດີ, ພຽງແຕ່ບໍ່ໃຫ້ຜູ້ຮັບໃຊ້ຂອງເຮົາ ເຣ
ໂນນ ຄາຫູນ, ແລະ ຜູ້ຮັບໃຊ້ຂອງເຮົາ
ແຊມໂຍ ເອັຈ ສະມິດ, ຜູ້ທີ່ເຮົາພໍໃຈຫລາຍ,
ແຍກຈາກກັນ ຈົນກວ່າພວກເຂົາຈະກັບ
ໄປເຖິງບ້ານເຮືອນຂອງພວກເຂົາ, ແລະ ນີ້
ເພື່ອຈຸດປະສົງອັນສະຫລາດໃນເຮົາ.

36 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າ, ແລະ ສິ່ງໃດກໍຕາມທີ່
ເຮົາກ່າວກັບຄົນໜຶ່ງ ກໍຄືກັນກັບເຮົາກ່າວ
ກັບທຸກຄົນ, ຈົ່ງເບີກບານເຖີດ, [ກ]ເດັກນ້ອຍໆ
ເອີຍ; ເພາະເຮົາຢູ່ໃນ [ຂ]ທ່າມກາງພວກເຈົ້າ,
ແລະ ເຮົາຈະບໍ່ [ຄ]ປະຖິ້ມພວກເຈົ້າ;

37 ແລະ ຕາບໃດທີ່ພວກເຈົ້າຖ່ອມຕົວຢູ່
ຕໍ່ໜ້າເຮົາ, ພອນແຫ່ງ [ກ]ອານາຈັກຈະເປັນ
ຂອງພວກເຈົ້າ.

38 ຈົ່ງຄາດແອວຂອງພວກເຈົ້າ ແລະ ຈົ່ງ
[ກ]ເຝົ້າລະວັງ ແລະ ຈົ່ງມີສະຕິ, ລໍຄອຍສຳ
ລັບການສະເດັດມາຂອງບຸດມະນຸດ, ເພາະ
ພຣະອົງຈະມາໃນຊົ່ວໂມງທີ່ພວກເຈົ້າບໍ່
ຄາດຄິດ.

39 ຈົ່ງ [ກ]ອະທິຖານສະເໝີເພື່ອບໍ່ໃຫ້ພວກ
ເຈົ້າເຂົ້າໄປສູ່ [ຂ]ການລໍ້ລວງ, ເພື່ອວ່າພວກ
ເຈົ້າຈະໄດ້ຄົງຢູ່ໃນວັນແຫ່ງການສະເດັດ
ມາຂອງພຣະອົງ, ບໍ່ວ່າໃນຊີວິດ ຫລື ໃນ
ຄວາມຕາຍ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 62

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ແຄມຝັ່ງແມ່ນ້ຳມີເຊີຣີ ທີ່ເມືອງຊາຣິຕັນ, ລັດມີເຊີຣີ, ວັນທີ 13 ເດືອນສິງຫາ, 1831. ໃນມື້ນີ້ສາດສະດາ ແລະ ກຸ່ມ*

31 *ກ* ແອວ 37:31; ຣລມ 13:14; ຄພ 101:11.
33 *ກ* ຄນພ ສັ່ງສອນ; ເປັນພະຍານ.
34 *ກ* 2 ນຟ 9:44; ຢຄ 2:2; ມຊຢ 2:28.
35 *ກ* ຄນພ ວຽກງານເຜີຍແຜ່.
36 *ກ* ຢຮ 13:33.
*ຂ* ມທ 18:20.
*ຄ* ອຊຢ 41:15–17; 1 ນຟ 21:14–15.
37 *ກ* ຄພ 50:35.
38 *ກ* ຄນພ ຍາມ, ຄົນຍາມ.
39 *ກ* ຄນພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄນພ ລໍ້ລວງ, ການລໍ້ລວງ.

*ຂອງເພິ່ນ, ຜູ້ພວມເດີນທາງຈາກເມືອງອິນດີເພັນເດັນສ໌ ຫາ ເມືອງເຄີດແລນ, ໄດ້ພົບກັບແອວເດີຫລາຍຄົນຜູ້ພວມເດີນທາງໄປຫາແຜ່ນດິນຊີໂອນ, ແລະ, ຫລັງຈາກໄດ້ທັກທາຍກັນດ້ວຍຄວາມຊື່ນຊົມແລ້ວ, ກໍໄດ້ຮັບການເປີດເຜີຍນີ້.*

*1–3, ປະຈັກພະຍານໄດ້ຖືກບັນທຶກໄວ້ໃນສະຫວັນ; 4–9, ແອວເດີຕ້ອງເດີນທາງ ແລະ ສັ່ງສອນຕາມການພິຈາລະນາ ແລະ ດັ່ງທີ່ໄດ້ຮັບການຊີ້ນຳຈາກພຣະວິນຍານ.*

1 ຈົ່ງເບິ່ງ, ແລະ ຈົ່ງເຊື່ອຟັງ, ໂອ້ ພວກ
ເຈົ້າແອວເດີຂອງສາດສະໜາຈັກຂອງ
ເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຈົ້າໄດ້ກ່າວ, ແມ່ນແຕ່ພຣະເຢຊູ
ຄຣິດ, ຜູ້ [ກ]ວິງວອນແທນພວກເຈົ້າ, ຜູ້ຮູ້ຈັກ
ຄວາມອ່ອນແອຂອງມະນຸດ ແລະ ຮູ້ຈັກວິທີ
[ຂ]ຊ່ວຍເຫລືອຄົນທີ່ຖືກ [ຄ]ລໍ້ລວງ.
2 ແລະ ຕາມຄວາມຈິງແລ້ວ ສາຍຕາ
ຂອງເຮົາຈ້ອງມອງຜູ້ຄົນທີ່ຍັງບໍ່ໄດ້ຂຶ້ນໄປ
ຫາແຜ່ນດິນຊີໂອນເທື່ອ; ດັ່ງນັ້ນ ພາລະກິດ
ຂອງພວກເຈົ້າຍັງບໍ່ທັນສຳເລັດ.
3 ເຖິງຢ່າງໃດກໍຕາມ, ພວກເຈົ້າໄດ້ຮັບ
ພອນແລ້ວ, ເພາະ [ກ]ປະຈັກພະຍານຊຶ່ງ
ພວກເຈົ້າໄດ້ສະແດງ ຖືກ [ຂ]ບັນທຶກໄວ້ຢູ່
ໃນສະຫວັນ ເພື່ອໃຫ້ເຫລົ່າທູດເບິ່ງ; ແລະ
ເຂົາເຈົ້າມີຄວາມປິຕິຍິນດີນຳພວກເຈົ້າ,
ແລະ [ຄ]ບາບຂອງພວກເຈົ້າໄດ້ຖືກອະໄພ
ໃຫ້ແລ້ວ.
4 ແລະ ບັດນີ້ຈົ່ງເດີນທາງຕໍ່ໄປ. ຈົ່ງໄປ
ເຕົ້າໂຮມກັນຢູ່ແຜ່ນດິນ [ກ]ຊີໂອນ; ແລະ ຈົ່ງ
ຮ່ວມຊຸມນຸມ ແລະ ປິຕິຍິນດີນຳກັນ, ແລະ
ຖວາຍສິນລະລຶກແດ່ພຣະຜູ້ສູງສຸດ.
5 ແລະ ຈາກນັ້ນໃຫ້ພວກເຈົ້າກັບຄືນໄປ
ກ່າວຄຳພະຍານ, ແທ້ຈິງແລ້ວ, ແມ່ນແຕ່
ພ້ອມກັນທຸກຄົນ, ຫລື ເປັນຄູ່ໆ, ດັ່ງທີ່ພວກ
ເຈົ້າເຫັນວ່າດີ, ມັນບໍ່ສຳຄັນສຳລັບເຮົາ; ຂໍ
ພຽງແຕ່ໃຫ້ຊື່ສັດ, ແລະ [ກ]ປະກາດຂ່າວອັນ
ໜ້າຊື່ນຊົມແກ່ຜູ້ອາໄສຂອງແຜ່ນດິນໂລກ,
ຫລື ທ່າມກາງບ່ອນຊຸມນຸມຂອງຄົນຊົ່ວ.
6 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ພາ
ພວກເຈົ້າມາຮ່ວມກັນເພື່ອຄຳສັນຍາຈະສຳ
ເລັດຜົນ, ເພື່ອວ່າຄົນຊື່ສັດໃນບັນດາພວກ
ເຈົ້າຈະຖືກຮັກສາໄວ້ ແລະ ປິຕິຍິນດີນຳກັນ
ໃນແຜ່ນດິນມີເຊີຣີ. ເຮົາ, ພຣະຜູ້ເປັນເຈົ້າ,
ສັນຍາກັບຄົນທີ່ຊື່ສັດ ແລະ [ກ]ກ່າວເທັດບໍ່
ໄດ້.
7 ເຮົາ, ພຣະຜູ້ເປັນເຈົ້າ, ເຕັມໃຈ, ຖ້າ
ຫາກຄົນໃດຄົນໜຶ່ງໃນບັນດາພວກເຈົ້າ
ຢາກຂີ່ມ້າ, ຫລື ຂີ່ລໍ, ຫລື ຂີ່ລົດມ້າ, ຄົນໆ
ນັ້ນຈະໄດ້ຮັບພອນນີ້, ຖ້າຫາກເຂົາຮັບມັນ
ຈາກພຣະຫັດຂອງພຣະຜູ້ເປັນເຈົ້າ, ດ້ວຍ
ໃຈທີ່ [ກ]ຮູ້ບຸນຄຸນໃນທຸກສິ່ງ.
8 ສິ່ງເຫລົ່ານີ້ຂຶ້ນຢູ່ກັບພວກເຈົ້າທີ່ຈະ
ເຮັດ ອີງຕາມການພິຈາລະນາ ແລະ ດັ່ງທີ່
ໄດ້ຮັບການຊີ້ນຳຈາກພຣະວິນຍານ.
9 ຈົ່ງເບິ່ງ, [ກ]ອານາຈັກເປັນຂອງພວກ
ເຈົ້າ. ແລະ ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາ
[ຂ]ຢູ່ກັບຄົນທີ່ຊື່ສັດສະເໝີໄປ. ແມ່ນເປັນດັ່ງ
ນັ້ນ. ອາແມນ.

**62** 1 *ກ* ຄພ 45:3–4.
ຄມພ ວິງວອນແທນ,
ຜູ້ວິງວອນແທນ.
*ຂ* ຮຣ 2:18;
ແອວ 7:12.
*ຄ* ຄມພ ລໍ້ລວງ, ການລໍ້ລວງ.
3 *ກ* ລກ 12:8–9.
ຄມພ ປະຈັກພະຍານ.
*ຂ* ຄມພ ໜັງສືທະ
ບຽນແຫ່ງຊີວິດ.
*ຄ* ຄພ 84:61.
4 *ກ* ຄພ 57:1–2.
5 *ກ* ຄມພ ວຽກງານເຜີຍແຜ່.
6 *ກ* ອທ 3:12.
7 *ກ* ຄມພ ຂອບຄຸນ, ຂອບ
ໃຈ, ຄວາມຂອບຄຸນ.
9 *ກ* ຄພ 61:37.
*ຂ* ມທ 28:20.

# ພາກທີ 63

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 30 ເດືອນສິງຫາ, 1831. ສາດສະດາ, ຊິດນີ ຣິກດອນ, ແລະ ອໍລີເວີ ຄາວເດີຣີ ໄດ້ໄປເຖິງເມືອງເຄີດແລນ ໃນວັນທີ 27 ເດືອນສິງຫາ ຈາກການໄປຢ້ຽມຢາມລັດມີເຊີຣີ. ປະຫວັດຂອງໂຈເຊັບ ສະມິດ ບັນຍາຍເຖິງການເປີດເຜີຍນີ້ວ່າ, "ໃນສະໄໝເລີ່ມຕົ້ນຂອງສາດສະໜາຈັກ, ມີຄວາມຮ້ອນໃຈຫລາຍທີ່ຈະໄດ້ຮັບພຣະຄຳຂອງພຣະຜູ້ເປັນເຈົ້າໃນທຸກເລື່ອງກ່ຽວກັບຄວາມລອດຂອງພວກເຮົາ; ແລະ ເມື່ອບັດນີ້ແຜ່ນດິນຊີໂອນເປັນສິ່ງສຳຄັນທີ່ສຸດທາງຝ່າຍໂລກໃນຄວາມຄິດຂອງພວກເຮົາ, ຂ້າພະເຈົ້າຈຶ່ງໄດ້ທູນຖາມພຣະຜູ້ເປັນເຈົ້າສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການເຕົ້າໂຮມຂອງໄພ່ພົນຂອງພຣະເຈົ້າ, ແລະ ການຊື້ທີ່ດິນ, ແລະ ເລື່ອງອື່ນໆ."*

*1–6, ວັນແຫ່ງພຣະພິໂລດຈະເກີດກັບຄົນຊົ່ວ; 7–12, ເຄື່ອງໝາຍມາເຖິງໂດຍສັດທາ; 13–19, ຄົນເປັນຊູ້ໃນໃຈຈະປະຕິເສດສັດທາ ແລະ ຈະຖືກໂຍນລົງໃນທະເລໄຟ; 20, ຄົນຊື່ສັດຈະໄດ້ຮັບມູນມໍລະດົກຢູ່ເທິງແຜ່ນດິນໂລກທີ່ປ່ຽນສະພາບ; 21, ເລື່ອງລາວທັງໝົດຂອງເຫດການທີ່ເກີດຂຶ້ນຢູ່ເທິງພູແຫ່ງການປ່ຽນສະພາບຍັງບໍ່ໄດ້ເປີດເຜີຍເທື່ອ; 22–23, ຄົນທີ່ເຊື່ອຟັງຈະໄດ້ຮັບຄວາມລຶກລັບຂອງອານາຈັກ; 24–31, ມູນມໍລະດົກທັງຫລາຍໃນຊີໂອນຕ້ອງໄດ້ຊື້; 32–35, ພຣະຜູ້ເປັນເຈົ້າອອກຄຳສັ່ງໃຫ້ມີສົງຄາມ, ແລະ ຄົນຊົ່ວຂ້າຄົນຊົ່ວ; 36–48, ໄພ່ພົນຂອງພຣະເຈົ້າຕ້ອງໄປເຕົ້າໂຮມກັນຢູ່ທີ່ຊີໂອນ ແລະ ຕ້ອງມອບເງິນເພື່ອສ້າງສາມັນຂຶ້ນ; 49–54, ພອນຖືກຢືນຢັນແກ່ຄົນຊື່ສັດໃນການສະເດັດມາຄັ້ງທີສອງ, ໃນການຟື້ນຄືນຊີວິດ, ແລະ ລະຫວ່າງພັນປີ; 55–58, ນີ້ຄືວັນແຫ່ງການເຕືອນ; 59–66, ພຣະນາມຂອງພຣະຜູ້ເປັນເຈົ້າຖືກໃຊ້ຢ່າງບໍ່ສົມຄວນ ໂດຍຜູ້ຄົນທີ່ບໍ່ມີສິດອຳນາດ.*

1 ຈົ່ງເຊື່ອຟັງ, ໂອ້ ເຈົ້າຜູ້ຄົນ, ແລະ ເປີດ
ໃຈຂອງເຈົ້າ ແລະ ງ່ຽງຫູຟັງຈາກແດນໄກ;
ແລະ ຟັງ, ເຈົ້າທີ່ເອີ້ນຕົນເອງວ່າຜູ້ຄົນຂອງ
ພຣະຜູ້ເປັນເຈົ້າ, ແລະ ຟັງພຣະຄຳຂອງ
ພຣະຜູ້ເປັນເຈົ້າ ແລະ ພຣະປະສົງຂອງ
ພຣະອົງກ່ຽວກັບເຈົ້າ.
2 ແທ້ຈິງແລ້ວ, ຕາມຄວາມຈິງ, ເຮົາກ່າວ
ວ່າ ຈົ່ງຟັງພຣະຄຳຂອງພຣະອົງ ຊຶ່ງພຣະ
ພິໂລດຂອງພຣະອົງເກີດກັບຄົນຊົ່ວ ແລະ
[ກ]ຄົນກະບົດ;
3 ຜູ້ຊຶ່ງປະສົງທີ່ຈະເອົາໄປແມ່ນແຕ່ຄົນທີ່
ພຣະອົງປະສົງທີ່ຈະ [ກ]ເອົາໄປ, ແລະ ຮັກສາ
ໃຫ້ມີຊີວິດ ຄົນທີ່ພຣະອົງຈະຮັກສາ;
4 ຜູ້ຊຶ່ງຈະສ້າງຂຶ້ນຕາມພຣະປະສົງ ແລະ
ຄວາມພໍພຣະໄທຂອງພຣະອົງເອງ; ແລະ
ທຳລາຍເມື່ອພຣະອົງພໍພຣະໄທ, ແລະ ສາ
ມາດຂັບໄລ່ຈິດວິນຍານລົງນະລົກ.
5 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ເອີ່ຍ
ສຽງຂອງເຮົາ, ແລະ ມັນຈະຕ້ອງຖືກເຊື່ອ
ຟັງ.
6 ດັ່ງນັ້ນ, ຕາມຄວາມຈິງແລ້ວ ເຮົາກ່າວ
ວ່າ ໃຫ້ຄົນຊົ່ວເອົາໃຈໃສ່, ແລະ ໃຫ້ຄົນກະ

**63** 2 *ກ* ຄມພ ກະບົດ, ການກະບົດ. | 3 *ກ* ຄມພ ຄວາມຕາຍທາງຮ່າງກາຍ.

ບົດຢ້ານກົວ ແລະ ຕົວສັ່ນ; ແລະ ໃຫ້ຜູ້ບໍ່ເຊື່ອປິດປາກ, ເພາະ [ກ]ວັນແຫ່ງພຣະພິໂລດຈະເກີດກັບພວກເຂົາ ຄືກັນກັບ [ຂ]ລົມຫົວກຸດ, ແລະ ເນື້ອໜັງທັງປວງຈະ [ຄ]ຮູ້ວ່າເຮົາຄືພຣະເຈົ້າ.

7 ແລະ ຄົນທີ່ສະແຫວງຫາ [ກ]ເຄື່ອງໝາຍຈະເຫັນເຄື່ອງໝາຍ, ແຕ່ບໍ່ແມ່ນຜົນທີ່ນຳໄປສູ່ຄວາມລອດ.

8 ຕາມ ຄວາມ ຈິງ ແລ້ວ, ເຮົາ ກ່າວ ກັບພວກເຈົ້າວ່າ ມີຄົນໃນບັນດາພວກເຈົ້າທີ່ສະແຫວງຫາເຄື່ອງໝາຍ, ແລະ ມີຄົນເຊັ່ນນັ້ນແມ່ນແຕ່ຕັ້ງແຕ່ຕົ້ນ;

9 ແຕ່, ຈົ່ງເບິ່ງ, ສັດທາບໍ່ໄດ້ມາເຖິງໂດຍເຄື່ອງໝາຍ, ແຕ່ເຄື່ອງໝາຍຕິດຕາມຄົນທີ່ເຊື່ອ.

10 ແທ້ຈິງແລ້ວ, ເຄື່ອງໝາຍມາເຖິງໂດຍ [ກ]ສັດທາ, ບໍ່ແມ່ນໂດຍຄວາມປະສົງ ຂອງມະນຸດ, ຫລື ໂດຍຄວາມພໍໃຈຂອງເຂົາ, ແຕ່ໂດຍພຣະປະສົງຂອງພຣະເຈົ້າ.

11 ແທ້ຈິງແລ້ວ, ເຄື່ອງໝາຍມາເຖິງໂດຍສັດທາ, ອັນນຳໄປສູ່ວຽກງານອັນຍິ່ງໃຫຍ່, ເພາະປາດສະຈາກ [ກ]ສັດທາ ຈະບໍ່ມີມະນຸດຄົນໃດເປັນທີ່ພໍພຣະໄທຕໍ່ພຣະເຈົ້າໄດ້; ແລະ ກັບຄົນໃດທີ່ພຣະເຈົ້າພຣະພິໂລດໃຫ້ ຄົນໆນັ້ນຈະບໍ່ເປັນທີ່ພໍພຣະໄທປານໃດ; ດັ່ງນັ້ນ, ກັບຄົນເຊັ່ນນັ້ນພຣະອົງຈະບໍ່ສະແດງເຄື່ອງໝາຍ, ເວັ້ນແຕ່ໃນ [ຂ]ພຣະພິໂລດ ອັນນຳໄປສູ່ [ຄ]ການກ່າວໂທດພວກເຂົາເທົ່ານັ້ນ.

12 ດັ່ງນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ພໍພຣະໄທກັບຄົນເຫລົ່ານັ້ນໃນບັນດາພວກເຈົ້າທີ່ສະແຫວງຫາເຄື່ອງໝາຍ ແລະ ການມະຫັດສະຈັນສຳລັບສັດທາ, ແລະ ບໍ່ແມ່ນສຳລັບຄວາມດີຂອງມະນຸດ ອັນນຳໄປສູ່ລັດສະໝີພາບຂອງເຮົາ.

13 ເຖິງຢ່າງໃດກໍຕາມ, ເຮົາໄດ້ມອບບັນຍັດໃຫ້, ແລະ ຫລາຍຄົນໄດ້ຫັນໜີໄປຈາກບັນຍັດຂອງເຮົາ ແລະ ບໍ່ຮັກສາມັນ.

14 ໃນບັນດາພວກເຈົ້າມີຊາຍ ແລະ ຍິງທີ່ [ກ]ຫລິ້ນຊູ້; ບາງຄົນໄດ້ຫັນໜີໄປຈາກພວກເຈົ້າ, ແລະ ຄົນອື່ນໆທີ່ຍັງຢູ່ກັບພວກເຈົ້າ ຊຶ່ງຕໍ່ໄປໃນພາຍໜ້າຈະຖືກເປີດເຜີຍ.

15 ໃຫ້ຄົນເຊັ່ນນັ້ນລະວັງ ແລະ ກັບໃຈຢ່າງໄວ, ຖ້າບໍ່ດັ່ງນັ້ນການພິພາກສາຈະມາເຖິງພວກເຂົາດັ່ງກັບດັກ, ແລະ ຄວາມໂງ່ຈ້າຂອງພວກເຂົາຈະຖືກສະແດງໃຫ້ປະຈັກ, ແລະ ວຽກງານຂອງພວກເຂົາຈະຕິດຕາມພວກເຂົາໄປໃນສາຍຕາຂອງຜູ້ຄົນ.

16 ແລະ ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າ, ດັ່ງທີ່ເຮົາໄດ້ກ່າວຜ່ານມາ, ຄົນທີ່ [ກ]ຫລຽວເບິ່ງຜູ້ຍິງ [ຂ]ດ້ວຍຄວາມໄຄ່ໃນນາງ, ຫລື ຖ້າຫາກຄົນໃດຄົນໜຶ່ງ [ຄ]ຫລິ້ນຊູ້ຢູ່ໃນໃຈ, ເຂົາຈະບໍ່ມີພຣະວິນຍານສະຖິດຢູ່ນຳ, ແຕ່ຈະປະຕິເສດຄວາມເຊື່ອ ແລະ ຈະຢ້ານກົວ.

17 ດັ່ງນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ກ່າວວ່າ ຄົນທີ່ [ກ]ຢ້ານກົວ, ແລະ ຜູ້ບໍ່ເຊື່ອ, ແລະ [ຂ]ຄົນຂີ້ຕົວະທຸກຄົນ, ແລະ ຜູ້ໃດກໍຕາມທີ່ມັກການກ່າວເວົ້າຕົວະ ແລະ [ຄ]ເວົ້າ

6 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ຍຸດຕິທຳ, ຄວາມຍຸດຕິທຳ.
ຂ ຢມຢ 30:23.
ຄ ອຊຢ 49:26.
7 ກ ຄພ 46:9. ຄມພ ເຄື່ອງໝາຍ.
10 ກ ມຣນ 7:37. ຄມພ ສັດທາ.
11 ກ ຮຣ 11:6.
ຂ ຄພ 35:11.
ຄ ຄພ 88:65.
14 ກ ຄພ 42:24–25.
16 ກ ມທ 5:27–28; ຄພ 42:23–26.
ຂ ຄມພ ກິເລດຕັນຫາ.
ຄ ຄມພ ຫລິ້ນຊູ້.
17 ກ ພນມ 21:8.
ຂ ຄມພ ຕົວະ.
ຄ ພນມ 22:15; ຄພ 76:103.

ຕົວະ ແລະ ຕົວະ, ແລະ ຄົນລ່ວງປະເວນີ,
ແລະ ໝໍເວດມົນຄາຖາ, ຈະມີສ່ວນຂອງ
ພວກເຂົາໃນ [ງ]ທະເລທີ່ລຸກໄໝ້ຢູ່ດ້ວຍໄຟ
ແລະ ມາດ, ຊຶ່ງເປັນ [ຈ]ຄວາມຕາຍເທື່ອທີ
ສອງ.
18 ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ວ່າ
ພວກເຂົາຈະບໍ່ມີສ່ວນໃນ [ກ]ການຟື້ນຄືນຊີ
ວິດຄັ້ງທຳອິດ.
19 ແລະ ບັດນີ້ ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນ
ເຈົ້າ, ກ່າວກັບພວກເຈົ້າວ່າ ພວກເຈົ້າບໍ່ໄດ້
ຖືກ [ກ]ຮັບຮອງ, ເພາະ ສິ່ງເຫລົ່ານີ້ມີຢູ່ໃນບັນ
ດາພວກເຈົ້າ.
20 ເຖິງຢ່າງໃດກໍຕາມ, ຄົນໃດທີ່ [ກ]ອົດ
ທົນ ໃນ ສັດທາ ແລະ ເຮັດ ຕາມ ຄວາມ
ປະສົງຂອງເຮົາ, ຄົນໆນັ້ນຈະເອົາຊະນະ,
ແລະ ຈະໄດ້ຮັບ [ຂ]ມູນມໍລະດົກເທິງແຜ່ນ
ດິນໂລກ ເມື່ອວັນແຫ່ງການປ່ຽນສະພາບ
ຈະມາເຖິງ;
21 ເມື່ອ [ກ]ແຜ່ນ ດິນ ໂລກ ຈະ [ຂ]ປ່ຽນ
ສະພາບ, ແມ່ນແຕ່ຕາມແບບແຜນ ຊຶ່ງຖືກ
ສະແດງໃຫ້ອັກຄະສາວົກຂອງເຮົາເຫັນຢູ່
ເທິງ [ຄ]ພູ; ຊຶ່ງຄວາມບໍລິບູນຂອງເລື່ອງນັ້ນ
ພວກເຈົ້າຍັງບໍ່ໄດ້ຮັບເທື່ອ.
22 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າ, ດັ່ງທີ່ເຮົາໄດ້ກ່າວໄວ້ວ່າ
ເຮົາຈະເຮັດໃຫ້ຄວາມປະສົງຂອງເຮົາເປັນ
ທີ່ຮູ້ຈັກແກ່ພວກເຈົ້າ, ຈົ່ງເບິ່ງ ເຮົາຈະເຮັດ
ໃຫ້ມັນເປັນທີ່ຮູ້ຈັກແກ່ພວກເຈົ້າ, ບໍ່ແມ່ນ
ໂດຍທາງບັນຍັດ, ເພາະມີຫລາຍຄົນທີ່ບໍ່
ໄດ້ຍຶດຖືທີ່ຈະຮັກສາບັນຍັດຂອງເຮົາ.
23 ແຕ່ແກ່ຄົນທີ່ຮັກສາບັນຍັດຂອງເຮົາ,
ເຮົາຈະມອບ [ກ]ຄວາມລຶກລັບແຫ່ງອານາ
ຈັກຂອງເຮົາໃຫ້ພວກເຂົາ, ແລະ ສິ່ງນັ້ນຈະ
ເປັນບໍ່ [ຂ]ນ້ຳທີ່ປະກອບດ້ວຍຊີວິດ, ຊຶ່ງ [ຄ]ພຸ່ງ
ຂຶ້ນໄປສູ່ຊີວິດອັນເປັນນິດ.
24 ແລະ ບັດນີ້, ຈົ່ງເບິ່ງ, ນີ້ຄືພຣະປະສົງ
ຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຈົ້າກ່ຽວກັບໄພ່ພົນຂອງພຣະເຈົ້າ,
ວ່າເຂົາຄວນໄປເຕົ້າໂຮມກັນຢູ່ທີ່ແຜ່ນດິນ
ຊີໂອນ, ບໍ່ແມ່ນໃນຄວາມຟ້າວຟັ່ງ, ຖ້າບໍ່
ດັ່ງນັ້ນຈະເກີດຄວາມສັບສົນ, ຊຶ່ງກໍ່ໃຫ້ເກີດ
ພະຍາດໂລຄາ.
25 ຈົ່ງ ເບິ່ງ, ແຜ່ນ ດິນ [ກ]ຊີໂອນ—ເຮົາ,
ພຣະຜູ້ເປັນເຈົ້າ, ຖືມັນໄວ້ຢູ່ໃນມືຂອງເຮົາ
ເອງ;
26 ເຖິງຢ່າງໃດກໍຕາມ, ເຮົາ, ພຣະຜູ້ເປັນ
ເຈົ້າ, ສົ່ງສິ່ງທີ່ເປັນຂອງ [ກ]ກາຍຊາຄືນໃຫ້
ແກ່ກາຍຊາ.
27 ດັ່ງນັ້ນ, ເຮົາພຣະຜູ້ເປັນເຈົ້າ ປະສົງ
ໃຫ້ພວກເຈົ້າຊື້ທີ່ດິນ, ເພື່ອວ່າພວກເຈົ້າຈະ
ໄດ້ປຽບໂລກ, ເພື່ອວ່າພວກເຈົ້າຈະມີສິດ
ໃນໂລກ, ເພື່ອວ່າພວກເຂົາຈະບໍ່ຖືກຍຸຍົງ
ໃຫ້ຄຽດແຄ້ນ.
28 ເພາະ [ກ]ຊາຕານໄດ້ໃສ່ໄວ້ໃນໃຈເຂົາ
ໃຫ້ໂນໂທແກ່ພວກເຈົ້າ, ແລະ ໃຫ້ເກີດການ
ນອງເລືອດ.

---

17 *ງ* ພນມ 19:20;
2 ນຟ 9:8–19, 26; 28:23;
ຢຄ 6:10; ແອວ 12:16–18;
ຄພ 76:36.
ຄມພ ນະລົກ.
*ຈ* ຄມພ ຄວາມຕາຍ
ທາງວິນຍານ.
18 *ກ* ພນມ 20:6.
19 *ກ* ຄມພ ຮັບຮອງ,
ການຮັບຮອງ.
20 *ກ* ຄພ 101:35.
*ຂ* ມທ 5:5;
ຄພ 59:2; 88:25–26.
21 *ກ* ຄມພ ແຜ່ນດິນໂລກ—
ພາວະສຸດທ້າຍຂອງ
ແຜ່ນດິນໂລກ.
*ຂ* ຄມພ ໂລກ—ທີ່
ສຸດຂອງໂລກ.
*ຄ* ມທ 17:1–3.
23 *ກ* ແອວ 12:9–11;
ຄພ 42:61; 84:19;
107:18–19.
*ຂ* ຄມພ ນ້ຳທີ່ປະກອບ
ດ້ວຍຊີວິດ.
*ຄ* ຢຮ 4:14.
25 *ກ* ຄມພ ຊີໂອນ.
26 *ກ* ລກ 20:25; ຄພ 58:21–23.
ຄມພ ປົກຄອງ,
ການປົກຄອງ.
28 *ກ* ຄມພ ມານ.

29 ດັ່ງນັ້ນ, ແຜ່ນດິນຊີໂອນຈະບໍ່ຖືກໄດ້ມາ ເວັ້ນເສຍແຕ່ຈະເປັນໂດຍການຊື້ ຫລື ໂດຍເລືອດ, ຖ້າບໍ່ດັ່ງນັ້ນ ຈະບໍ່ມີມູນມໍລະດົກເລີຍສຳລັບພວກເຈົ້າ.

30 ແລະ ຖ້າຫາກໂດຍການຊື້, ຈົ່ງເບິ່ງພວກເຈົ້າຈະໄດ້ຮັບພອນ;

31 ແລະ ຖ້າ ຫາກ ໂດຍ ເລືອດ, ເພາະພວກເຈົ້າຖືກຫ້າມບໍ່ໃຫ້ຫລັ່ງເລືອດ, ເບິ່ງເຖີດ, ສັດຕູຂອງພວກເຈົ້າຈະໂຈມຕີພວກເຈົ້າ, ແລະ ພວກເຈົ້າຈະຖືກຂັບໄລ່ຈາກເມືອງໜຶ່ງຫາອີກເມືອງໜຶ່ງ, ແລະ ຈາກທຳມະສາລາໜຶ່ງຫາອີກທຳມະສາລາໜຶ່ງ, ແລະ ໜ້ອຍຄົນຈະຄົງຢູ່ເພື່ອຮັບມູນມໍລະດົກ.

32 ເຮົາ, ພຣະຜູ້ເປັນເຈົ້າ, ພຣະພິໂລດກັບຄົນຊົ່ວ; ເຮົາຢຸດຢັ້ງວິນຍານຂອງເຮົາຈາກຜູ້ອາໄສຂອງແຜ່ນດິນໂລກ.

33 ເຮົາໄດ້ສາບານໃນພຣະພິໂລດຂອງເຮົາ, ແລະ ໄດ້ອອກຄຳສັ່ງໃຫ້ມີ [ກ]ສົງຄາມຢູ່ເທິງພື້ນແຜ່ນດິນໂລກ, ແລະ ຄົນຊົ່ວຈະຂ້າຄົນຊົ່ວ, ແລະ ຄວາມຢ້ານກົວຈະເກີດກັບມະນຸດທຸກຄົນ;

34 ແລະ [ກ]ໄພ່ພົນຂອງພຣະເຈົ້າເກືອບຈະຫລົບໜີບໍ່ໄດ້; ເຖິງຢ່າງໃດກໍຕາມ, ເຮົາ, ພຣະຜູ້ເປັນເຈົ້າ, ຢູ່ກັບພວກເຂົາ, ແລະ ຈະລົງ [ຂ]ມາໃນຟ້າສະຫວັນ ຈາກທີ່ປະທັບຂອງພຣະບິດາຂອງເຮົາ ແລະ ເຜົາຜານ [ຄ]ຄົນຊົ່ວດ້ວຍ [ງ]ໄຟທີ່ບໍ່ຮູ້ມອດ.

35 ແລະ ຈົ່ງເບິ່ງ, ມັນຍັງບໍ່ເກີດຂຶ້ນເທື່ອ, ແຕ່ບໍ່ດົນ.

36 ດັ່ງນັ້ນ, ໂດຍທີ່ເຫັນວ່າເຮົາ, ພຣະຜູ້ເປັນເຈົ້າ, ໄດ້ອອກຄຳສັ່ງໃຫ້ມີສິ່ງເຫລົ່ານີ້ທັງໝົດຢູ່ເທິງພື້ນແຜ່ນດິນໂລກ, ເຮົາຈຶ່ງປະສົງໃຫ້ໄພ່ພົນຂອງເຮົາໄປເຕົ້າໂຮມກັນຢູ່ທີ່ແຜ່ນດິນຊີໂອນ;

37 ແລະ ໃຫ້ມະນຸດທຸກຄົນຮັບເອົາ [ກ]ຄວາມຊອບທຳໄວ້ໃນມືຂອງຕົນ ແລະ ຄວາມຊື່ສັດໄວ້ເທິງແອວຂອງເຂົາ, ແລະ ເປັ່ງ [ຂ]ສຽງເຕືອນຜູ້ອາໄສຂອງແຜ່ນດິນໂລກ; ແລະ ປະກາດທັງໂດຍຖ້ອຍຄຳ ແລະ ໂດຍການຫລົບໜີ ເພື່ອ [ຄ]ຄວາມພິນາດຈະມາສູ່ຄົນຊົ່ວ.

38 ດັ່ງນັ້ນ, ໃຫ້ສານຸສິດຂອງເຮົາໃນເມືອງເຄີດແລນຈັດການນຳທຸລະຝ່າຍໂລກຂອງພວກເຂົາ, ຜູ້ທີ່ອາໄສຢູ່ໃນບ້ານສວນແຫ່ງນີ້.

39 ໃຫ້ ຜູ້ຮັບໃຊ້ຂອງເຮົາ ໄທທັດ ບຽວລິງສ໌, ຜູ້ດູແລບ່ອນນັ້ນ, ຂາຍທີ່ດິນ, ເພື່ອວ່າລາວຈະຕຽມພ້ອມໃນ ລະດູໃບໄມ້ປົ່ງທີ່ຈະມາເຖິງ ເພື່ອອອກເດີນທາງຂຶ້ນໄປຍັງແຜ່ນດິນຊີໂອນ, ກັບຄົນເຫລົ່ານັ້ນທີ່ອາໄສຢູ່ໃນພື້ນແຜ່ນດິນນັ້ນ, ຍົກເວັ້ນແຕ່ຄົນເຫລົ່ານັ້ນຜູ້ທີ່ເຮົາຈະສະຫງວນໄວ້ໃຫ້ແກ່ເຮົາເອງ, ວ່າຈະບໍ່ໄປຈົນກວ່າເຮົາຈະບັນຊາພວກເຂົາ.

40 ແລະ ໃຫ້ສິ່ງເງິນທັງໝົດທີ່ສາມາດມອບໃຫ້, ມັນບໍ່ສຳຄັນສຳລັບເຮົາວ່າຈະໜ້ອຍ ຫລື ຫລາຍປານໃດ, ຂຶ້ນໄປຍັງແຜ່ນດິນຊີໂອນ, ໄປໃຫ້ຄົນທີ່ເຮົາໄດ້ກຳນົດໄວ້ໃຫ້ຮັບ.

41 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ຈະມອບອຳນາດໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ

33 ກ ຄນພ ສົງຄາມ.
34 ກ ຄນພ ໄພ່ພົນຂອງພຣະເຈົ້າ.
ຂ ຄນພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຄ ມທ 3:12; 2 ນຟ 26:6; ຄພ 45:57; 64:24; 101:23–25, 66. ຄນພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
ງ ຄນພ ໄຟ.
37 ກ ຄນພ ຊອບທຳ, ຄວາມຊອບທຳ.
ຂ ຄພ 1:4.
ຄ ອຊຢ 47:11.

ໂຈເຊັບ ສະມິດ, ຜູ້ລູກ, ເພື່ອໂດຍພຣະວິນ
ຍານລາວຈະສາມາດ ກຫລິງເຫັນຄົນເຫລົ່າ
ນັ້ນທີ່ຈະຂຶ້ນໄປແຜ່ນດິນຊີໂອນ, ແລະ ສາ
ນຸສິດ ເຫລົ່ານັ້ນຂອງ ເຮົາຜູ້ ຈະຢູ່ຕໍ່ໄປໃນ
ບ່ອນນີ້.
42 ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ ນິວເອັນ ເຄ
ວິດນີ ຮັກສາຮ້ານຂອງລາວໄວ້, ຫລື ອີກຄຳ
ໜຶ່ງ, ຮ້ານຄ້າ, ໄວ້ຊົ່ວໄລຍະໜຶ່ງ.
43 ເຖິງຢ່າງໃດກໍຕາມ, ໃຫ້ລາວແບ່ງເງິນ
ຊຶ່ງລາວຈະສາມາດແບ່ງໃຫ້ໄດ້, ເພື່ອສົ່ງ
ຂຶ້ນໄປຍັງແຜ່ນດິນຊີໂອນ.
44 ຈົ່ງເບິ່ງ, ສິ່ງເຫລົ່ານີ້ຢູ່ໃນມືຂອງລາວ
ເອງ, ໃຫ້ລາວເຮັດດ້ວຍປັນຍາ.
45 ຕາມ ຄວາມ ຈິງແລ້ວ ເຮົາກ່າວວ່າ
ໃຫ້ລາວໄດ້ຮັບການແຕ່ງຕັ້ງເປັນຕົວແທນ
ສານຸສິດທີ່ຈະຢູ່ຕໍ່ໄປໃນບ່ອນນີ້, ແລະ ໃຫ້
ລາວໄດ້ຮັບການແຕ່ງຕັ້ງສູ່ອຳນາດນີ້;
46 ແລະ ບັດນີ້ ຈົ່ງໄປ ຢ້ຽມຢາມໜ່ວຍ
ຕ່າງໆຂອງສາດສະໜາຈັກຢ່າງໄວ, ຈົ່ງອະ
ທິບາຍເລື່ອງເຫລົ່ານີ້ແກ່ພວກເຂົາ, ພ້ອມ
ກັບຜູ້ຮັບໃຊ້ຂອງເຮົາ ອໍລີເວີ ຄາວເດີຣີ. ຈົ່ງ
ເບິ່ງ, ນີ້ຄືຄວາມປະສົງຂອງເຮົາ, ຄືການໄດ້
ຮັບເງິນແມ່ນແຕ່ດັ່ງທີ່ເຮົາໄດ້ແນະນຳ.
47 ຄົນທີ່ ກຊື່ສັດ ແລະ ອົດທົນ ຈະເອົາ
ຊະນະໂລກ.
48 ຄົນທີ່ສົ່ງຊັບສິນຂຶ້ນໄປຍັງແຜ່ນດິນ
ຂອງຊີໂອນ ຈະໄດ້ຮັບ ກມູນມໍລະດົກໃນ
ໂລກນີ້, ແລະ ວຽກງານຂອງເຂົາຈະຕິດ
ຕາມເຂົາ, ແລະ ລາງວັນໃນໂລກທີ່ຈະມາ
ເຖິງນຳອີກ.
49 ແທ້ຈິງແລ້ວ, ຄົນທີ່ ກຕາຍໃນພຣະຜູ້
ເປັນເຈົ້າໄດ້ຮັບພອນແລ້ວ, ນັບແຕ່ນີ້ເປັນ
ຕົ້ນໄປ, ເມື່ອພຣະຜູ້ເປັນເຈົ້າຈະສະເດັດມາ,
ແລະ ສິ່ງເກົ່າຈະ ຂໝົດໄປ, ແລະ ທຸກສິ່ງ
ເປັນຂອງໃໝ່, ເຂົາຈະ ຄລຸກຂຶ້ນຈາກຄວາມ
ຕາຍ ແລະ ຈະບໍ່ ງຕາຍຫລັງຈາກນັ້ນ, ແລະ
ຈະໄດ້ຮັບມູນມໍລະດົກຢູ່ຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າ, ໃນນະຄອນສັກສິດ.
50 ແລະ ຄົນ ທີ່ ມີ ຊີ ວິ ດ ຕອນ ພຣະ ຜູ້
ເປັນເຈົ້າຈະສະເດັດມາ, ແລະ ໄດ້ຮັກສາ
ສັດທາ, ເຂົາຍ່ອມ ກເປັນສຸກ; ເຖິງຢ່າງໃດ
ກໍຕາມ, ມີກຳນົດໄວ້ໃຫ້ເຂົາ ຂຕາຍຕາມອາ
ຍຸຂອງມະນຸດ.
51 ດັ່ງນັ້ນ, ເດັກນ້ອຍ ກຈະ ຂເຕີບໃຫຍ່
ຂຶ້ນຈົນກວ່າເຂົາຈະເຖົ້າແກ່; ຄົນເຖົ້າແກ່
ຈະຕາຍ; ແຕ່ເຂົາຈະບໍ່ຫລັບຢູ່ກັບຝຸ່ນດິນ,
ແຕ່ເຂົາຈະຖືກ ຄປ່ຽນໄປໃນພິບຕາດຽວ.
52 ດັ່ງນັ້ນ, ເພາະເຫດນີ້ ອັກຄະສາວົກ
ຈຶ່ງສັ່ງສອນແກ່ໂລກເຖິງການຟື້ນຄືນຊີວິດ
ຂອງຄົນຕາຍ.
53 ສິ່ງເຫລົ່ານີ້ເປັນສິ່ງທີ່ເຈົ້າຈະຫລຽວ
ຫາ; ແລະ, ໂດຍກ່າວຕາມວິທີຂອງພຣະຜູ້
ເປັນເຈົ້າ, ບັດນີ້ ມັນ ກໃກ້ຈະມາເຖິງແລ້ວ,
ແລະ ໃນເວລາທີ່ຈະມາເຖິງ, ແມ່ນແຕ່ໃນ
ວັນແຫ່ງການສະເດັດມາຂອງບຸດມະນຸດ.
54 ແລະ ຈົນກວ່າຊົ່ວໂມງນັ້ນຈະມາ
ເຖິງ ຈະມີ ກຍິງບໍລິສຸດທີ່ໂງ່ຈ້າໃນບັນດາຜູ້
ສະຫລາດ; ແລະ ເມື່ອຊົ່ວໂມງນັ້ນມາເຖິງ

41 ກ ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
47 ກ ມຊຢ 2:41; ຄພ 6:13.
48 ກ ຄພ 101:18.
49 ກ ພນມ 14:13; ຄພ 42:44–47.
ຂ 2 ກຣທ 5:17.
ຄ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ງ ພນມ 21:4; ແອວ 11:45; ຄພ 88:116. ຄມພ ອະມະຕະ, ຄວາມເປັນອະມະຕະ.
50 ກ ຄມພ ພອນ, ໃຫ້ພອນ, ເປັນພອນ.
ຂ ຄມພ ຄວາມຕາຍທາງຮ່າງກາຍ.
51 ກ ຄມພ ພັນປີ.
ຂ ອຊຢ 65:20–22; ຄພ 45:58; 101:29–31.
ຄ 1 ກຣທ 15:51–52; ຄພ 43:32.
53 ກ ຄພ 35:15.
54 ກ ມທ 25:1–13; ຄພ 45:56–59.

ຈະ ເກີດ ການ ແຍກຄົນຊອບທຳ ແລະ ຄົນ
ຊົ່ວອອກຈາກກັນ; ແລະ ໃນວັນນັ້ນເຮົາຈະ
ສົ່ງເຫລົ່າທູດຂອງເຮົາມາເພື່ອ ᵃຖອນຄົນ
ຊົ່ວອອກ ແລະ ໂຍນພວກເຂົາເຂົ້າໃນໄຟທີ່
ບໍ່ຮູ້ມອດ.
55 ແລະ ບັດນີ້ ຈົ່ງເບິ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບເຈົ້າວ່າ, ເຮົາ, ພຣະຜູ້
ເປັນເຈົ້າ, ບໍ່ພໍໃຈກັບຜູ້ຮັບໃຊ້ຂອງເຮົາ
ᵃຊິດນີ ຣິກດອນ; ລາວ ᵇຍົກຕົນເອງຂຶ້ນໃນ
ໃຈ, ແລະ ບໍ່ຍອມຮັບເອົາຄຳແນະນຳ, ແຕ່
ເຮັດໃຫ້ພຣະວິນຍານໂສກເສົ້າ;
56 ດັ່ງນັ້ນ ᵃການຂຽນຂອງລາວບໍ່ເປັນທີ່
ຍອມຮັບຕໍ່ພຣະຜູ້ເປັນເຈົ້າ, ແລະ ລາວຈະ
ຕ້ອງເຮັດອີກອັນໜຶ່ງ; ແລະ ຖ້າຫາກພຣະ
ຜູ້ເປັນເຈົ້າບໍ່ຮັບເອົາມັນ, ຈົ່ງເບິ່ງ ລາວຈະບໍ່
ໄດ້ຢືນຢູ່ໃນຕຳແໜ່ງຊຶ່ງເຮົາໄດ້ກຳນົດລາວ
ໄວ້ອີກຕໍ່ໄປ.
57 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບເຈົ້າວ່າ ᵃຄົນທີ່ປາດຖະ
ໜາໃນຫົວໃຈຂອງເຂົາ, ໃນຄວາມອ່ອນ
ໂຍນ, ທີ່ຈະ ᵇເຕືອນຄົນບາບໃຫ້ມາສູ່ການ
ກັບໃຈ, ກໍໃຫ້ເຂົາໄດ້ຮັບການແຕ່ງຕັ້ງສູ່
ອຳນາດນີ້.
58 ເພາະນີ້ຄືວັນແຫ່ງການເຕືອນ, ແລະ
ບໍ່ແມ່ນວັນແຫ່ງຖ້ອຍຄຳຢ່າງຫລວງຫລາຍ.
ເພາະເຮົາ, ພຣະຜູ້ເປັນເຈົ້າ, ຈະບໍ່ຖືກເຍາະ
ເຍີ້ຍໃນຍຸກສຸດທ້າຍ.
59 ຈົ່ງເບິ່ງ, ເຮົາມາຈາກເບື້ອງເທິງ, ແລະ
ອຳນາດຂອງເຮົາຢູ່ເບື້ອງລຸ່ມ. ເຮົາຢູ່ເໜືອ
ທຸກສິ່ງ, ແລະ ໃນທຸກສິ່ງ, ແລະ ຜ່ານທຸກ
ສິ່ງ, ແລະ ᵃຄົ້ນຫາທຸກສິ່ງ, ແລະ ວັນນັ້ນ
ຈະມາເຖິງເມື່ອທຸກສິ່ງທັງປວງຈະຂຶ້ນຢູ່ກັບ
ເຮົາ.
60 ຈົ່ງເບິ່ງ, ເຮົາຄື ᵃອາລະຟາ ແລະ ໂອ
ເມຄາ, ແມ່ນແຕ່ພຣະເຢຊູຄຣິດ.
61 ດັ່ງນັ້ນ, ໃຫ້ມະນຸດທັງປວງລະວັງວິທີ
ທີ່ພວກເຂົາຈະໃຊ້ ᵃນາມຂອງເຮົາໃນປາກ
ຂອງພວກເຂົາ—
62 ເພາະ ຈົ່ງ ເບິ່ງ, ຕາມ ຄວາມ ຈິງ ແລ້ວ
ເຮົາກ່າວວ່າ ມີຫລາຍຄົນ ຈະຢູ່ພາຍໃຕ້
ການກ່າວໂທດນີ້, ຜູ້ໃຊ້ພຣະນາມຂອງ
ພຣະຜູ້ເປັນເຈົ້າ, ແລະ ໃຊ້ມັນຢ່າງບໍ່ສົມ
ຄວນ, ໂດຍບໍ່ມີສິດອຳນາດ.
63 ດັ່ງນັ້ນ, ໃຫ້ສາດສະໜາຈັກກັບໃຈ
ຈາກບາບຂອງພວກເຂົາ, ແລະ ເຮົາ, ພຣະ
ຜູ້ເປັນເຈົ້າ, ຈະເປັນເຈົ້າຂອງພວກເຂົາ; ຖ້າ
ບໍ່ດັ່ງນັ້ນ ພວກເຂົາຈະຖືກຕັດອອກ.
64 ຈົ່ງຈື່ຈຳໄວ້ວ່າ ສິ່ງທີ່ມາຈາກເບື້ອງ
ເທິງເປັນ ᵃສິ່ງສັກສິດ, ແລະ ຕ້ອງ ᵇກ່າວ
ເຖິງດ້ວຍຄວາມລະມັດລະວັງ, ແລະ ໂດຍ
ການບັງຄັບຂອງພຣະວິນຍານ; ແລະ ໃນ
ນີ້ບໍ່ມີການກ່າວໂທດ, ແລະ ເຈົ້າຈະໄດ້ຮັບ
ພຣະວິນຍານ ᶜຜ່ານການອະທິຖານ; ດັ່ງ
ນັ້ນ, ປາດສະຈາກສິ່ງນີ້ການກ່າວໂທດຍັງ
ຈະມີຢູ່.
65 ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ, ໂຈເຊັບ
ສະມິດ, ຜູ້ລູກ, ແລະ ຊິດນີ ຣິກດອນ,
ສະແຫວງຫາມັນຢູ່ໃນບ້ານເຮືອນ, ດັ່ງທີ່
ພວກເຂົາໄດ້ຮັບການສິດສອນໂດຍພຣະ
ວິນຍານຜ່ານ ᵃການອະທິຖານ.

---

54 *ຂ* ມຊຢ 16:2.
55 *ກ* ຄມພ ຣິກດອນ, ຊິດນີ.
*ຂ* ຄມພ ຈອງຫອງ, ຄວາມຈອງຫອງ.
56 *ກ* ຄພ 58:50.
57 *ກ* ຄພ 4:3–6.
*ຂ* ຄພ 18:14–15.
ຄມພ ເຕືອນ, ຄຳເຕືອນ; ວຽກງານເຜີຍແຜ່.
59 *ກ* 1 ກຣທ 2:10.
60 *ກ* ຄມພ ອາລະຟາ ແລະ ໂອເມຄາ.
61 *ກ* ຄມພ ຄຳຫຍາບຄາຍ.
64 *ກ* ຄມພ ສັກສິດ, ຄວາມສັກສິດ.
*ຂ* ຄມພ ຄາລະວະ, ຄວາມຄາລະວະ.
*ຄ* ຄພ 42:14.
65 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

66 ຕ້ອງ ເອົາ ຊະນະ ສິ່ງ ເຫລົ່າ ນີ້ ຜ່ານ
ຄວາມອົດທົນ, ເພື່ອວ່າຄົນເຊັ່ນນັ້ນຈະໄດ້
ຮັບ [ກ]ນໍ້າໜັກແຫ່ງ [ຂ]ລັດສະໝີພາບນິລັນ
ດອນຫລາຍກວ່າ, ຖ້າບໍ່ດັ່ງນັ້ນ, ການກ່າວ
ໂທດຈະໜັກກວ່າເດີມ. ອາແມນ.

# ພາກທີ 64

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແກ່ພວກແອວເດີຂອງສາດສະໜາຈັກ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 11 ເດືອນກັນຍາ, 1831. ສາດສະດາພວມຕຽມຈະຍ້າຍໄປເມືອງໄຮຣຳ, ລັດໂອໄຮໂອ, ເພື່ອເຮັດວຽກງານການແປພຣະຄຳພີ ຂອງເພິ່ນຕໍ່ໄປ, ຊຶ່ງໄດ້ຢຸດພັກໃນຂະນະທີ່ເພິ່ນຢູ່ລັດມີເຊີຣີ. ກຸ່ມຂອງອ້າຍນ້ອງຜູ້ໄດ້ຖືກບັນຊາໃຫ້ເດີນທາງໄປຫາຊີໂອນ (ລັດມີເຊີຣີ) ໄດ້ຕຽມພ້ອມຢ່າງຂະຫຍັນຂັນແຂງທີ່ຈະອອກເດີນທາງໃນເດືອນຕຸລາ. ໃນຊ່ວງໄລຍະທີ່ຫຍຸ້ງຍາກນີ້, ກໍໄດ້ຮັບການເປີດເຜີຍ.*

*1–11, ໄພ່ພົນຂອງພຣະເຈົ້າໄດ້ຖືກບັນຊາໃຫ້ອະໄພໃຫ້ກັນ, ຖ້າບໍ່ດັ່ງນັ້ນບາບທີ່ຮ້າຍແຮງກວ່າຈະຄົງຢູ່ກັບພວກເຂົາ; 12–22, ຕ້ອງນຳຄົນທີ່ບໍ່ກັບໃຈມາຢູ່ຕໍ່ໜ້າສາດສະໜາຈັກ; 23–25, ຄົນທີ່ຈ່າຍສ່ວນສິບຈະບໍ່ຖືກເຜົາໄໝ້ໃນການສະເດັດມາຂອງພຣະຜູ້ເປັນເຈົ້າ; 26–32, ໄພ່ພົນຂອງພຣະເຈົ້າຖືກເຕືອນກ່ຽວກັບເລື່ອງໜີ້ສິນ; 33–36, ຄົນກະບົດຈະຖືກຕັດອອກຈາກຊີໂອນ; 37–40, ສາດສະໜາຈັກຈະພິພາກສາ ປະຊາຊາດ; 41–43, ຊີໂອນຈະຈະເລີນຮຸ່ງເຮືອງ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າໄດ້ກ່າວດັ່ງນີ້ກັບພວກ
ເຈົ້າ, ໂອ້ ພວກເຈົ້າແອວເດີຂອງສາດສະ
ໜາຈັກຂອງເຮົາ, ຈົ່ງເຊື່ອຟັງ ແລະ ຟັງ,
ແລະ ຮັບເອົາຄວາມປະສົງຂອງເຮົາກ່ຽວ
ກັບພວກເຈົ້າ.
2 ເພາະ ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ
ກັບ ພວກ ເຈົ້າ ວ່າ ເຮົາປະສົງໃຫ້ພວກ
ເຈົ້າ [ກ]ເອົາຊະນະໂລກ; ດັ່ງນັ້ນ ເຮົາຈະມີ
[ຂ]ຄວາມເມດຕາສົງສານຕໍ່ພວກເຈົ້າ.
3 ມີບາງຄົນໃນ ບັນດາພວກເຈົ້າທີ່ໄດ້
ເຮັດບາບ; ແຕ່ຕາມຄວາມຈິງແລ້ວ ເຮົາ
ກ່າວວ່າ ໃນເທື່ອນີ້ເທື່ອດຽວ, ເພື່ອ [ກ]ລັດ
ສະໝີພາບຂອງເຮົາເອງ, ແລະ ເພື່ອຄວາມ
ລອດຂອງຈິດວິນຍານ, ເຮົາຈຶ່ງໄດ້ [ຂ]ອະໄພ
ບາບໃຫ້ແກ່ພວກເຈົ້າແລ້ວ.
4 ເຮົາຈະເມດຕາພວກເຈົ້າ, ເພາະເຮົາ
ໄດ້ມອບອານາຈັກໃຫ້ແກ່ພວກເຈົ້າແລ້ວ.
5 ແລະ [ກ]ຂໍກະແຈແຫ່ງຄວາມລຶກລັບ
ຂອງອານາຈັກ ຈະບໍ່ຖືກເອົາໄປຈາກຜູ້ຮັບ
ໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຜ່ານ
ວິທີທີ່ເຮົາໄດ້ກຳນົດໄວ້, ໃນຂະນະທີ່ລາວມີ
ຊີວິດຢູ່, ຕາບໃດທີ່ລາວປະຕິບັດຕາມ [ຂ]ພິທີ
ການຂອງເຮົາ.
6 ມີບາງຄົນທີ່ຫາໂອກາດຕໍ່ຕ້ານລາວ
ໂດຍບໍ່ມີເຫດຜົນ;

---

63:66 *ກ* 2 ກຣທ 4:17.
*ຂ* ຣມ 8:18; ຄພ 58:4; 136:31.
**64** 2 *ກ* 1 ຢຮ 5:4.
*ຂ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.
3 *ກ* ມຊ 1:39.
*ຂ* ອຊຢ 43:25.
5 *ກ* ຄພ 28:7; 84:19. ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຂ* ຄມພ ພິທີການ.

7 ເຖິງຢ່າງໃດກໍຕາມ, ລາວໄດ້ເຮັດບາບ;
ແຕ່ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າວ່າ, ເຮົາ, ພຣະຜູ້ເປັນເຈົ້າ, [ກ]ອະໄພ
ບາບໃຫ້ແກ່ຄົນເຫລົ່ານັ້ນທີ່ [ຂ]ສາລະພາບ
ບາບຂອງເຂົາຢູ່ຕໍ່ໜ້າເຮົາ ແລະ ຂໍອະໄພ,
ຜູ້ທີ່ບໍ່ໄດ້ເຮັດບາບ ຊຶ່ງນຳໄປສູ່ [ຄ]ຄວາມ
ຕາຍ.
8 ສານຸສິດຂອງເຮົາ, ໃນສະໄໝບູຮານ,
ຫາ [ກ]ໂອກາດຕໍ່ຕ້ານກັນ ແລະ ບໍ່ໄດ້ໃຫ້
ອະໄພແກ່ກັນໃນໃຈຂອງພວກເຂົາ; ແລະ
ເພາະຄວາມຊົ່ວຮ້າຍນີ້ ພວກເຂົາຈຶ່ງທຸກທໍ
ລະມານ ແລະ ຖືກ [ຂ]ຕີສອນຢ່າງຮຸນແຮງ.
9 ດັ່ງນັ້ນ, ເຮົາກ່າວກັບພວກເຈົ້າວ່າ
ພວກເຈົ້າຄວນ [ກ]ອະໄພໃຫ້ກັນແລະກັນ;
ເພາະຄົນທີ່ບໍ່ [ຂ]ໃຫ້ອະໄພຄວາມຜິດແກ່ພີ່
ນ້ອງຂອງຕົນ ຈະຖືກກ່າວໂທດຢູ່ຕໍ່ພຣະ
ພັກຂອງພຣະຜູ້ເປັນເຈົ້າ; ເພາະບາບທີ່
ຮ້າຍແຮງກວ່າຈະຄົງຢູ່ກັບເຂົາ.
10 ເຮົາ, ພຣະຜູ້ເປັນເຈົ້າ, ຈະ [ກ]ໃຫ້ອະ
ໄພຜູ້ທີ່ເຮົາຈະໃຫ້ອະໄພ, ແຕ່ພວກເຈົ້າຖືກ
ຮຽກຮ້ອງ [ຂ]ໃຫ້ອະໄພແກ່ມະນຸດທັງປວງ.
11 ແລະ ພວກເຈົ້າຄວນກ່າວໃນໃຈ
ຂອງພວກເຈົ້າ—ໃຫ້ພຣະເຈົ້າ [ກ]ຕັດສິນ
ລະຫວ່າງຂ້າພະເຈົ້າກັບທ່ານ, ແລະ ມອບ
ລາງວັນໃຫ້ທ່ານຕາມ [ຂ]ການກະທຳຂອງ
ທ່ານ.
12 ແລະ ຄົນທີ່ບໍ່ກັບໃຈຈາກບາບຂອງ
ຕົນ, ແລະ ບໍ່ສາລະພາບມັນ, ພວກເຈົ້າຈະ
ນຳເຂົາມາຢູ່ຕໍ່ໜ້າຂອງ [ກ]ສາດສະໜາຈັກ,
ແລະ ເຮັດກັບເຂົາດັ່ງທີ່ພຣະຄຳພີກ່າວແກ່
ພວກເຈົ້າ, ບໍ່ວ່າຈະເປັນໂດຍບັນຍັດ ຫລື
ໂດຍການເປີດເຜີຍກໍຕາມ.
13 ແລະ ສິ່ງນີ້ພວກເຈົ້າຈະເຮັດ ເພື່ອ
ວ່າພຣະເຈົ້າຈະໄດ້ຮັບການສັນລະເສີນ—
ບໍ່ແມ່ນເພາະວ່າພວກເຈົ້າບໍ່ໄດ້ໃຫ້ອະໄພ,
ບໍ່ມີຄວາມເມດຕາສົງສານ, ແຕ່ເພາະວ່າ
ພວກເຈົ້າຈະຖືກຕ້ອງໃນສາຍຕາຂອງກົດ,
ເພື່ອວ່າພວກເຈົ້າຈະບໍ່ໄດ້ເຮັດໃຫ້ຜູ້ໃຫ້ກົດ
ຂອງພວກເຈົ້າຂຸ່ນເຄືອງ—
14 ຕາມຄວາມຈິງແລ້ວ ເຮົາກ່າວວ່າ
ເພາະເຫດນີ້ ພວກເຈົ້າຈຶ່ງເຮັດສິ່ງເຫລົ່ານີ້.
15 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ພຣະ
ພິໂລດກັບລາວ ຜູ້ທີ່ເຄີຍເປັນຜູ້ຮັບໃຊ້ຂອງ
ເຮົາ ເອຊະຣາ ບູທ໌, ແລະ ກັບຜູ້ຮັບໃຊ້ຂອງ
ເຮົາ ໄອຊິກ ມໍລີ ນຳອີກ, ເພາະພວກເຂົາບໍ່
ຮັກສາກົດ, ທັງບັນຍັດກໍບໍ່ໄດ້ຮັກສາ;
16 ພວກເຂົາສະແຫວງຫາຄວາມຊົ່ວໃນ
ໃຈຕົນ, ແລະ ເຮົາ, ພຣະຜູ້ເປັນເຈົ້າ, ໄດ້
ຢັບຢັ້ງພຣະວິນຍານຂອງເຮົາ. ພວກເຂົາ
[ກ]ກ່າວໂທດສິ່ງນັ້ນວ່າຊົ່ວ ຊຶ່ງທີ່ແທ້ແລ້ວບໍ່
ໄດ້ຊົ່ວ; ເຖິງຢ່າງໃດກໍຕາມ ເຮົາໄດ້ໃຫ້ອະ
ໄພແກ່ຜູ້ຮັບໃຊ້ຂອງເຮົາ ໄອຊິກ ມໍລີ.
17 ແລະ ຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ
ພາດທຣິດ ນຳອີກ, ຈົ່ງເບິ່ງ, ລາວໄດ້ເຮັດ
ບາບ, ແລະ [ຂ]ຊາຕານສະແຫວງຫາທີ່ຈະ
ທຳລາຍຈິດວິນຍານຂອງລາວ; ແຕ່ເມື່ອ
ສິ່ງເຫລົ່ານີ້ຖືກເຮັດໃຫ້ເປັນທີ່ຮູ້ຈັກແກ່
ພວກເຂົາ, ແລະ ພວກເຂົາກັບໃຈຈາກ

7 *ກ* ຄມພ ປົດບາບ, ການປົດ
ບາບ;
ອະໄພ, ໃຫ້ອະໄພ.
*ຂ* ຈບຊ 5:6–7;
ຄພ 19:20; 58:43.
ຄມພ ສາລະພາບ,
ການສາລະພາບ.
*ຄ* ຄພ 76:31–37.
8 *ກ* ຄມພ ຂັດແຍ້ງ,
ການຂັດແຍ້ງ.
*ຂ* ຄມພ ຕີສອນ, ການຕີສອນ.
9 *ກ* ມຣກ 11:25–26;
ຄພ 82:1.
*ຂ* ມທ 6:14–15;
ອຟຊ 4:32.
10 *ກ* ອພຍ 33:19;
ແອວ 39:6;
ຄພ 56:14.
*ຂ* ມຊຍ 26:29–31.
11 *ກ* 1 ຊມອ 24:12.
*ຂ* 2 ຕມທ 4:14.
12 *ກ* ຄພ 42:80–93.
16 *ກ* 2 ນຟ 15:20;
ຄພ 121:16.
17 *ກ* ຄມພ ພາດທຣິດ, ເອດເວີດ.
*ຂ* ຄມພ ມານ.

ຄວາມຊົ່ວ, ແລ້ວພວກເຂົາຈະໄດ້ຮັບການ
ໃຫ້ອະໄພ.
18 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວວ່າ ເຮົາເຫັນສົມຄວນທີ່ຜູ້ຮັບໃຊ້ຂອງ
ເຮົາ ຊິດນີ ກຽວເບີດ, ຫລັງຈາກສອງສາມ
ອາທິດ, ຈະກັບຄືນໄປເຮັດທຸລະກິດຂອງ
ລາວ, ແລະ ກັບຄືນຫາໜ້າທີ່ຂອງລາວໃນ
ແຜ່ນດິນຊີໂອນ;
19 ແລະ ສິ່ງທີ່ລາວໄດ້ເຫັນ ແລະ ໄດ້
ຍິນຈະໄດ້ເປັນທີ່ຮູ້ຈັກແກ່ສານຸສິດຂອງ
ເຮົາ, ເພື່ອວ່າພວກເຂົາຈະບໍ່ຕາຍ. ແລະ
ເພາະເຫດນີ້ ເຮົາຈຶ່ງໄດ້ກ່າວກ່ຽວກັບເລື່ອງ
ເຫລົ່ານີ້.
20 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ຜູ້ຮັບໃຊ້ຂອງເຮົາ ໄອຊິກ ມໍລີ ຈະບໍ່
ຖືກ [ກ]ລໍ້ລວງເກີນກວ່າທີ່ລາວຈະສາມາດທົນ
ກັບມັນໄດ້, ແລະ ແນະນຳຜິດ ຈົນນຳຄວາມ
ເສຍຫາຍມາໃຫ້ພວກເຈົ້າ, ເຮົາຈຶ່ງໄດ້ບັນ
ຊາລາວໃຫ້ຂາຍຮົ້ວສວນຂອງລາວເສຍ.
21 ເຮົາບໍ່ປະສົງໃຫ້ຜູ້ຮັບໃຊ້ຂອງເຮົາ
ເຟຣ໌ເດຣິກ ຈີ ວິວລຽມສ໌ ຂາຍຮົ້ວສວນຂອງ
ລາວ, ເພາະເຮົາ, ພຣະຜູ້ເປັນເຈົ້າ, ປະສົງ
ຈະຮັກສາທີ່ໝັ້ນໃນແຜ່ນດິນເຄີດແລນໄວ້
ເປັນເວລາຫ້າປີ, ຊຶ່ງໃນເວລານັ້ນ ເຮົາຈະບໍ່
ລົບລ້າງຄົນຊົ່ວ, ເພື່ອວ່າໂດຍການນັ້ນເຮົາ
ຈະຮັກສາບາງຈຳນວນໄວ້.
22 ແລະ ຫລັງຈາກວັນນັ້ນ, ເຮົາ, ພຣະ
ຜູ້ເປັນເຈົ້າ, ຈະບໍ່ຖືວ່າຄົນໃດ [ກ]ຜິດ ທີ່
ຈະຂຶ້ນໄປຫາແຜ່ນດິນຊີໂອນດ້ວຍໃຈທີ່
ເປີດຮັບ; ເພາະເຮົາ, ພຣະຜູ້ເປັນເຈົ້າ, ຮຽກ
ຮ້ອງ [ຂ]ຫົວໃຈຂອງລູກຫລານມະນຸດ.
23 ຈົ່ງເບິ່ງ, ບັດນີ້ ມັນຖືກເອີ້ນວ່າ [ກ]ວັນນີ້
ຈົນກວ່າ [ຂ]ການສະເດັດມາຂອງບຸດມະນຸດ,
ແລະ ຕາມຄວາມຈິງແລ້ວ ມັນເປັນວັນແຫ່ງ
[ຄ]ການເສຍສະລະ, ແລະ ເປັນວັນແຫ່ງການ
ເກັບສ່ວນສິບຈາກຜູ້ຄົນຂອງເຮົາ; ເພາະ
ຄົນທີ່ຈ່າຍ [ງ]ສ່ວນສິບຈະບໍ່ຖືກ [ຈ]ເຜົາໄໝ້ໃນ
ການສະເດັດມາຂອງພຣະອົງ.
24 ເພາະຫລັງຈາກວັນນີ້ [ກ]ການເຜົາໄໝ້
ຈະມາເຖິງ—ນີ້ຄືການກ່າວຕາມວິທີຂອງ
ພຣະຜູ້ເປັນເຈົ້າ—ເພາະຕາມຄວາມຈິງ
ແລ້ວ ເຮົາກ່າວວ່າ ມື້ອື່ນ [ຂ]ຄົນທີ່ອວດດີ
ແລະ ຄົນທີ່ເຮັດຄວາມຊົ່ວຮ້າຍ ຈະເປັນຄື
ກັນກັບເຟືອງເຂົ້າ; ແລະ ເຮົາຈະເຜົາພວກ
ເຂົາໃຫ້ໝົດ, ເພາະເຮົາຄືຈອມໂຍທາ;
ແລະ ເຮົາຈະບໍ່ໄວ້ຊີວິດຄົນໃດທີ່ເຫລືອຢູ່
ໃນ [ຄ]ບາບີໂລນ.
25 ດັ່ງນັ້ນ, ຖ້າຫາກພວກເຈົ້າເຊື່ອເຮົາ,
ພວກເຈົ້າຈະທຳງານໃນຂະນະທີ່ເອີ້ນວ່າ
ວັນນີ້.
26 ແລະ ບໍ່ເຫັນສົມຄວນເລີຍທີ່ຜູ້ຮັບໃຊ້
ຂອງເຮົາ, [ກ]ນິວເອັນ ເຄ ວິດນີ ແລະ ຊິດນີ
ກຽວເບີດ, ຈະຂາຍ [ຂ]ຮ້ານຄ້າຂອງຕົນ
ແລະ ຊັບສິນຂອງຕົນ; ເພາະສິ່ງນີ້ບໍ່ເປັນ
ສິ່ງສະຫລາດ ຈົນກວ່າຄົນທີ່ເຫລືອຢູ່ຂອງ
ສາດສະໜາຈັກ, ຊຶ່ງຍັງຢູ່ໃນບ່ອນນີ້, ຈະ
ຂຶ້ນໄປສູ່ແຜ່ນດິນຊີໂອນກ່ອນ.
27 ຈົ່ງເບິ່ງ, ມີກ່າວໄວ້ຢູ່ໃນກົດຂອງເຮົາ,

20 ກ ຄມພ ລໍ້ລວງ, ການລໍ້ລວງ.
22 ກ ຄມພ ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.
ຂ ອພຍ 35:5; ຄພ 59:15; 64:34.
23 ກ ຄພ 45:6; 64:24–25.
ຂ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຄ ຄມພ ເສຍສະລະ, ການເສຍສະລະ.
ງ ມລກ 3:10–11. ຄມພ ສ່ວນສິບ, ເງິນສ່ວນສິບ.
ຈ ມລກ 4:1; 3 ນຟ 25:1; ຈສ—ປ 1:37.
24 ກ ອຊຢ 66:15–16. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ; ໂລກ—ທີ່ສຸດຂອງໂລກ.
ຂ ມລກ 3:15; 2 ນຟ 12:12; 23:11. ຄມພ ຈອງຫອງ, ຄວາມຈອງຫອງ.
ຄ ຄພ 1:16. ຄມພ ບາເບນ, ບາບີໂລນ.
26 ກ ຄມພ ວິດນີ, ນິວເອັນ ເຄ.
ຂ ຄພ 57:8.

ຫລື ສັ່ງຫ້າມ, ບໍ່ໃຫ້ [ກ]ເປັນໜີ້ສັດຕູຂອງ
ພວກເຈົ້າ;
28 ແຕ່ຈົ່ງເບິ່ງ, ບໍ່ໄດ້ມີກ່າວໄວ້ໃນເວລາ
ໃດເລີຍວ່າ ພຣະຜູ້ເປັນເຈົ້າບໍ່ຄວນເອົາ
ເມື່ອພຣະອົງປະສົງຈະເອົາ, ແລະ ຈ່າຍ
ຕາມທີ່ພຣະອົງເຫັນວ່າດີ.
29 ດັ່ງນັ້ນ, ເພາະພວກເຈົ້າເປັນຕົວ
ແທນ, ພວກເຈົ້າຈຶ່ງເປັນຄົນແລ່ນວຽກໃຫ້
ພຣະຜູ້ເປັນເຈົ້າ; ແລະ ສິ່ງໃດກໍຕາມທີ່
ພວກເຈົ້າເຮັດຕາມພຣະປະສົງຂອງພຣະຜູ້
ເປັນເຈົ້າ, ກໍເປັນທຸລະກິດຂອງພຣະຜູ້ເປັນ
ເຈົ້າ.
30 ແລະ ພຣະອົງໄດ້ກຳນົດພວກເຈົ້າໃຫ້
ຈັດຫາສຳລັບໄພ່ພົນຂອງພຣະເຈົ້າໃນຍຸກ
ສຸດທ້າຍນີ້, ເພື່ອວ່າພວກເຂົາຈະໄດ້ຮັບ
[ກ]ມູນມໍລະດົກໃນແຜ່ນດິນຊີໂອນ.
31 ແລະ ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ,
ປະກາດແກ່ພວກເຈົ້າ, ແລະ [ກ]ຄຳຂອງເຮົາ
ແນ່ນອນ ແລະ ຈະ ບໍ່ [ຂ]ລົ້ມເຫລວ, ວ່າພວກ
ເຂົາຈະໄດ້ຮັບມັນ.
32 ແຕ່ ທຸກ ສິ່ງ ຕ້ອງ ເກີດ ຂຶ້ນ ໃນ ເວລາ
ຂອງມັນ.
33 ດັ່ງນັ້ນ, ຢ່າ [ກ]ເມື່ອຍລ້າໃນການເຮັດ
ວຽກງານດີ, ເພາະພວກເຈົ້າພວມວາງຮາກ
ຖານຂອງວຽກງານອັນຍິ່ງໃຫຍ່. ແລະ ຈາກ
[ຂ]ສິ່ງເລັກນ້ອຍ ສິ່ງຍິ່ງໃຫຍ່ຈະເກີດຂຶ້ນ.
34 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າ [ກ]ຮຽກຮ້ອງ
[ຂ]ຫົວໃຈ ແລະ ຈິດໃຈທີ່ເຕັມໃຈ; ແລະ ຄົນ
ທີ່ເຕັມໃຈ ແລະ [ຄ]ເຊື່ອຟັງ ຈະໄດ້ຢູ່ດີກິນດີຢູ່
ໃນແຜ່ນດິນຊີໂອນໃນຍຸກສຸດທ້າຍນີ້.
35 ແລະ [ກ]ຄົນກະບົດຈະຖືກ [ຂ]ຕັດອອກ
ຈາກແຜ່ນດິນຊີໂອນ, ແລະ ຈະຖືກສົ່ງ
ອອກໄປ, ແລະ ຈະບໍ່ໄດ້ຮັບແຜ່ນດິນເປັນ
ມູນມໍລະດົກ.
36 ເພາະ, ຕາມຄວາມຈິງແລ້ວ ເຮົາກ່າວ
ວ່າ ຄົນກະບົດບໍ່ໄດ້ເປັນເລືອດເນື້ອເຊື້ອໄຂ
ຂອງ [ກ]ເອຟະຣາອິມ, ດັ່ງນັ້ນ ເຂົາຈະຖືກ
ຖອນອອກໄປ.
37 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ເຮັດ
ໃຫ້ສາດສະໜາຈັກຂອງເຮົາໃນຍຸກສຸດ
ທ້າຍນີ້ເປັນຄືກັນກັບຜູ້ພິພາກສາທີ່ນັ່ງຢູ່
ເທິງຄ້ອຍພູ, ຫລື ໃນບ່ອນສູງ, ເພື່ອພິພາກ
ສາປະຊາຊາດທັງຫລາຍ.
38 ເພາະເຫດການຈະບັງເກີດຂຶ້ນຄື ຜູ້
ອາໄສຂອງຊີໂອນ ຈະ [ກ]ພິພາກສາທຸກສິ່ງ
ທີ່ກ່ຽວກັບຊີໂອນ.
39 ແລະ ພວກເຂົາຈະພິສູດຄົນເວົ້າຕົວະ
ແລະ ຄົນໜ້າຊື່ໃຈຄົດ, ແລະ ຄົນທີ່ບໍ່ໄດ້
ເປັນ [ກ]ອັກຄະສາວົກ ແລະ ສາດສະດາຈະ
ຖືກເຮັດໃຫ້ເປັນທີ່ຮູ້ຈັກ.
40 ແລະ ແມ່ນແຕ່ [ກ]ອະທິການ, ຜູ້ຊຶ່ງ
ເປັນ [ຂ]ຄົນຕັດສິນ, ແລະ ທີ່ປຶກສາຂອງ
ລາວ, ຖ້າຫາກພວກເຂົາບໍ່ຊື່ສັດໃນການ
[ຄ]ພິທັກຮັກສາຂອງພວກເຂົາ, ພວກເຂົາຈະ
ຖືກກ່າວໂທດ, ແລະ [ງ]ຄົນອື່ນຈະຖືກແຕ່ງ
ຕັ້ງຂຶ້ນແທນພວກເຂົາ.

27 *ກ* ຄມພ ໜີ້.
30 *ກ* ຄພ 63:48.
31 *ກ* ມຣກ 13:31; 2 ນຟ 31:15; ຄພ 1:37–38.
*ຂ* ຄພ 76:3.
33 *ກ* ຄລຕ 6:9.
*ຂ* ຄພ 123:16.
34 *ກ* ມກ 6:8.
*ຂ* ພບຍ 32:46; ຢຊ 22:5; ມມ 9:27. ຄມພ ໃຈ.
*ຄ* ອຊຢ 1:19. ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
35 *ກ* ຄມພ ກະບົດ, ການກະບົດ.
*ຂ* ຄພ 41:5; 50:8–9; 56:3. ຄມພ ການຖືກໄລ່ອອກ.
36 *ກ* ພບຍ 33:16–17.
38 *ກ* ອຊຢ 2:3–4; ຄພ 133:21.
39 *ກ* ພນມ 2:2. ຄມພ ອັກຄະສາວົກ.
40 *ກ* ຄມພ ອະທິການ.
*ຂ* ຄພ 58:17; 107:72–74.
*ຄ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
*ງ* ຄພ 107:99–100.

41 ເພາະ, ຈົ່ງເບິ່ງ, ເຮົາກ່າວກັບພວກ
ເຈົ້າວ່າ [ກ]ຊີໂອນຈະ ຈະເລີນຮຸ່ງເຮືອງ, ແລະ
[ຂ]ລັດສະໝີພາບຂອງ ພຣະຜູ້ເປັນເຈົ້າຈະຢູ່
ເທິງນາງ;
42 ແລະ ນາງຈະເປັນ [ກ]ທຸງສັນຍານໃຫ້
ແກ່ຜູ້ຄົນ, ແລະ ທຸກປະຊາຊາດພາຍໃຕ້ຟ້າ
ສະຫວັນຈະມາຫານາງ.
43 ແລະ ວັນນັ້ນຈະມາເຖິງ ເມື່ອປະຊາ
ຊາດຂອງແຜ່ນດິນໂລກຈະ [ກ]ຕົວສັ່ນເພາະ
ນາງ, ແລະ ຈະຢ້ານກົວ ເພາະຄົນທີ່ໜ້າ
ຢ້ານກົວຂອງນາງ. ພຣະຜູ້ເປັນເຈົ້າໄດ້
ກ່າວໄວ້ດັ່ງນີ້. ອາແມນ.

# ພາກທີ 65

*ການເປີດເຜີຍກ່ຽວກັບການອະທິຖານ ທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 30 ເດືອນຕຸລາ, 1831.*

*1–2, ຂໍກະແຈຂອງອານາຈັກຂອງພຣະເຈົ້າໄດ້ຖືກມອບໃຫ້ມະນຸດຢູ່ເທິງແຜ່ນດິນໂລກ, ແລະ ອຸດົມການແຫ່ງພຣະກິດຕິຄຸນຈະມີໄຊ; 3–6, ອານາຈັກສະຫວັນແຫ່ງພັນປີຈະມາເຖິງ ແລະ ຮວມເຂົ້າກັບອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ.*

1 ຈົ່ງເຊື່ອຟັງ, ແລະ ເບິ່ງແມ, ສຽງຄືກັບ
ຜູ້ທີ່ສົ່ງລົງມາຈາກເບື້ອງບົນ, ຜູ້ຊຶ່ງຍິ່ງໃຫຍ່
ແລະ ມີອຳນາດ, ຜູ້ທີ່ອອກໄປເຖິງທີ່ສຸດ
ຂອງແຜ່ນດິນໂລກ, ແທ້ຈິງແລ້ວ, ຜູ້ທີ່ສຽງ
ອອກໄປເຖິງມະນຸດ—ຈົ່ງ [ກ]ຕຽມທາງຂອງ
ພຣະຜູ້ເປັນເຈົ້າ, ໂດຍເຮັດທາງຂອງພຣະ
ອົງໃຫ້ຊື່.
2 [ກ]ຂໍກະແຈຂອງ [ຂ]ອານາຈັກຂອງພຣະ
ເຈົ້າໄດ້ຖືກມອບໃຫ້ແກ່ມະນຸດເທິງແຜ່ນ
ດິນໂລກ, ແລະ ຈາກບ່ອນນັ້ນພຣະກິດຕິ
ຄຸນຈະຂະຫຍາຍອອກໄປຈົນເຖິງທີ່ສຸດ
ຂອງແຜ່ນດິນໂລກ, ຄືກັນກັບ [ຄ]ຫີນກ້ອນ
ໜຶ່ງຊຶ່ງແຕກອອກມາເອງຈາກໜ້າຜາໂດຍ
ບໍ່ມີຜູ້ໃດເຮັດຈະກິ້ງອອກໄປຈົນ [ງ]ເຕັມແຜ່ນ
ດິນໂລກ.
3 ແທ້ຈິງແລ້ວ, ສຽງປ່າວຮ້ອງ—ຈົ່ງຕຽມ
ທາງຂອງພຣະຜູ້ເປັນເຈົ້າ, ຈົ່ງຕຽມ [ກ]ງານ
ລ້ຽງສະຫລອງພຣະເມສານ້ອຍ, ຈົ່ງຕຽມ
ພ້ອມສຳລັບ [ຂ]ເຈົ້າບ່າວ.
4 ຈົ່ງອະທິຖານຫາພຣະຜູ້ເປັນເຈົ້າ, ຈົ່ງ
ເອີ້ນຫາພຣະນາມທີ່ສັກສິດຂອງພຣະອົງ,
ຈົ່ງເຮັດໃຫ້ວຽກງານອັນໜ້າອັດສະຈັນໃຈ
ຂອງພຣະອົງເປັນທີ່ຮູ້ຈັກໃນບັນດາຜູ້ຄົນ.
5 ຈົ່ງເອີ້ນຫາພຣະຜູ້ເປັນເຈົ້າ, ເພື່ອວ່າ
ອານາຈັກຂອງພຣະອົງຈະຂະຫຍາຍອອກ

41 *ກ* ຄມພ ຊີໂອນ.
*ຂ* ຄພ 45:67; 84:4–5; 97:15–20.
ຄມພ ລັດສະໝີພາບ.
42 *ກ* ຄມພ ປ້າຍສັນຍານ.
43 *ກ* ອຊຢ 60:14;
ຄພ 97:19–20.
**65** 1 *ກ* ອຊຢ 40:3;
ມທ 3:3;
ຢຮ 1:23.
2 *ກ* ມທ 16:19;
ຄພ 42:69.
ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຂ* ຄພ 90:1–5.
*ຄ* ດນອ 2:34–45.
*ງ* ພສສ 72:19.
ຄມພ ຍຸກສຸດທ້າຍ;
ດານີເອນ—ພຣະທຳດານີເອນ.
3 *ກ* ມທ 22:1–14;
ພນມ 19:9;
ຄພ 58:11.
*ຂ* ຄມພ ເຈົ້າບ່າວ.

ໄປເທິງແຜ່ນດິນໂລກ, ເພື່ອວ່າຜູ້ອາໄສຢູ່
ໃນນັ້ນຈະໄດ້ຮັບມັນ, ແລະ ຕຽມພ້ອມສຳ
ລັບວັນເວລາທີ່ຈະມາເຖິງ, ຊຶ່ງໃນເວລາ
ນັ້ນບຸດມະນຸດຈະລົງ [ກ]ມາໃນຟ້າສະຫວັນ,
[ຂ]ຫຸ້ມຫໍ່ດ້ວຍຄວາມຮຸ່ງເຫລື້ອມແຫ່ງ [ຄ]ລັດ
ສະໝີພາບຂອງພຣະອົງ, ເພື່ອພົບກັບ [ງ]ອາ
ນາຈັກຂອງພຣະເຈົ້າ ຊຶ່ງຕັ້ງຢູ່ເທິງແຜ່ນດິນ
ໂລກ.
6 ດັ່ງນັ້ນ, ຂໍໃຫ້ [ກ]ອານາຈັກຂອງພຣະ
ເຈົ້າຈົ່ງຂະຫຍາຍອອກໄປ, ເພື່ອວ່າ [ຂ]ອາ
ນາຈັກສະຫວັນຈະມາ, ເພື່ອວ່າ ພຣະ
ອົງ, ໂອ້ ພຣະອົງເຈົ້າ, ຈະໄດ້ຮັບການສັນ
ລະເສີນໃນສະຫວັນ ເຊັ່ນດຽວກັບຢູ່ເທິງ
ແຜ່ນດິນໂລກ, ເພື່ອວ່າສັດຕູຂອງພຣະອົງ
ຈະຖືກປາບ; ເພາະກຽດຕິຍົດ, ອຳນາດ,
ແລະ ລັດສະໝີພາບເປັນ [ຄ]ຂອງພຣະ
ອົງ, ຕະຫລອດການ ແລະ ຕະຫລອດໄປ.
ອາແມນ.

## ພາກທີ 66

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 29 ເດືອນຕຸລາ, 1831. ວິວລຽມ ອີ ມິກລີລິນ ໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າໃນທີ່ລັບ ຂໍໃຫ້ພຣະອົງເຮັດໃຫ້ເປັນທີ່ຮູ້ຈັກແກ່ສາດສະດາ ເພື່ອຕອບຄຳຖາມຫ້າຂໍ້ , ຊຶ່ງໂຈເຊັບ ສະມິດ ບໍ່ຮູ້ຈັກ. ຕາມຄຳຂໍຮ້ອງຂອງນາຍມິກລີລິນ, ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການເປີດເຜີຍນີ້.*

*1–4, ພັນທະສັນຍາອັນເປັນນິດຄືຄວາມສົມບູນແຫ່ງພຣະກິດຕິຄຸນ; 5–8, ແອວເດີຕ້ອງສັ່ງສອນ, ເປັນພະຍານ, ແລະ ໃຫ້ເຫດຜົນກັບຜູ້ຄົນ; 9–13, ການຮັບໃຊ້ທາງສາດສະໜາກິດຢ່າງຊື່ສັດຮັບປະກັນວ່າຈະໄດ້ຮັບຊີວິດນິລັນດອນເປັນມູນມໍລະດົກ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວ
ດັ່ງນີ້ກັບຜູ້ຮັບໃຊ້ຂອງເຮົາ ວິວລຽມ ອີ
ມິກລີລິນ—ເຈົ້າເປັນສຸກແລ້ວ, ຕາບໃດທີ່
ເຈົ້າຫັນໜີຈາກຄວາມຊົ່ວຮ້າຍຂອງເຈົ້າ,
ແລະ ຮັບເອົາຄວາມຈິງຂອງເຮົາ, ແມ່ນແຕ່
ຫລາຍຕໍ່ຫລາຍຄົນທີ່ [ກ]ເຊື່ອໃນນາມຂອງ
ເຮົາ, ພຣະຜູ້ເປັນເຈົ້າ ພຣະຜູ້ໄຖ່ຂອງເຈົ້າ,
ພຣະຜູ້ຊ່ວຍໃຫ້ລອດຂອງໂລກໄດ້ກ່າວ.
2 ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າ
ວ່າ ເຈົ້າເປັນສຸກແລ້ວ ເພາະເຈົ້າໄດ້ຮັບ
ເອົາ [ກ]ພັນທະສັນຍາອັນເປັນນິດຂອງເຮົາ,
ແມ່ນແຕ່ຄວາມສົມບູນແຫ່ງພຣະກິດຕິ
ຄຸນຂອງເຮົາ, ທີ່ສົ່ງອອກໄປຫາລູກຫລານ
ມະນຸດ, ເພື່ອວ່າເຂົາຈະມີ [ຂ]ຊີວິດ ແລະ ຖືກ
ເຮັດໃຫ້ເປັນຜູ້ຮັບສ່ວນຂອງລັດສະໝີພາບ
ຊຶ່ງຈະຖືກເປີດເຜີຍໃນຍຸກສຸດທ້າຍ, ດັ່ງທີ່
ຖືກຂຽນໄວ້ໂດຍສາດສະດາ ແລະ ອັກຄະ
ສາວົກໃນສະໄໝບູຮານ.
3 ຕາມຄວາມຈິງແລ້ວ ເຮົາກ່າວກັບ

5 *ກ* ມທ 24:30.
*ຂ* ພສສ 93:1.
*ຄ* ຄມພ ລັດສະໝີພາບ.
*ງ* ດນອ 2:44.
6 *ກ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
*ຂ* ພນມ 11:15.
*ຄ* 1 ຂຄ 29:11; ມທ 6:13.

**66** 1 *ກ* ຢຮ 1:12. ຄມພ ເຊື່ອ, ຄວາມເຊື່ອ.
2 *ກ* ຄມພ ພັນທະສັນຍາໃໝ່ ແລະ ເປັນນິດ.
*ຂ* ຢຮ 10:10; 3 ນຟ 5:13.

ເຈົ້າ, ຜູ້ຮັບໃຊ້ຂອງເຮົາ ວິວລຽມ, ວ່າເຈົ້າ ສະອາດ, ແຕ່ບໍ່ແມ່ນທັງໝົດ; ສະນັ້ນ, ຈົ່ງ ກັບ ໃຈ, ຈາກ ສິ່ງເຫລົ່ານັ້ນຊຶ່ງບໍ່ເປັນທີ່ພໍ ພຣະໄທໃນສາຍຕາຂອງເຮົາ, ພຣະຜູ້ເປັນ ເຈົ້າໄດ້ກ່າວ, ເພາະພຣະຜູ້ເປັນເຈົ້າຈະ [ກ]ສະແດງໃຫ້ເຈົ້າເຫັນສິ່ງເຫລົ່ານັ້ນ.

4 ແລະ ບັດນີ້, ຕາມຄວາມຈິງແລ້ວ, ເຮົາ, ພຣະຜູ້ເປັນເຈົ້າ, ຈະສະແດງໃຫ້ເຈົ້າເຫັນ ສິ່ງທີ່ເຮົາປະສົງກ່ຽວກັບເຈົ້າ, ຫລື ສິ່ງທີ່ ເປັນຄວາມປະສົງຂອງເຮົາກ່ຽວກັບເຈົ້າ.

5 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວ ກັບເຈົ້າວ່າ ມັນເປັນຄວາມປະສົງຂອງເຮົາ ທີ່ເຈົ້າຈະ [ກ]ປະກາດພຣະກິດຕິຄຸນຂອງເຮົາ ຈາກແຜ່ນດິນໜຶ່ງຫາອີກແຜ່ນດິນໜຶ່ງ, ແລະ ຈາກເມືອງໜຶ່ງຫາອີກເມືອງໜຶ່ງ, ແທ້ຈິງ ແລ້ວ, ໃນພາກພື້ນຕ່າງໆທີ່ອ້ອມຮອບເຫລົ່າ ນັ້ນ ບ່ອນທີ່ມັນຍັງບໍ່ຖືກປະກາດເທື່ອ.

6 ຢ່າຢູ່ຫລາຍມື້ໃນບ່ອນນີ້; ບໍ່ໃຫ້ຂຶ້ນໄປ ຍັງແຜ່ນດິນຊີໂອນເທື່ອ; ແຕ່ຕາບໃດທີ່ເຈົ້າ ສາມາດສົ່ງໄປໄດ້, ຈົ່ງສົ່ງໄປ; ຖ້າບໍ່ດັ່ງນັ້ນ, ກໍຢ່າຄິດກ່ຽວກັບຊັບສິນຂອງເຈົ້າ.

7 ຈົ່ງ [ກ]ໄປຫາແຜ່ນດິນທາງທິດຕາເວັນ ອອກ, ສະແດງ [ຂ]ປະຈັກພະຍານໃນທຸກ ບ່ອນ, ໃຫ້ແກ່ທຸກຜູ້ຄົນ ແລະ ໃນທຳມະສາ ລາຂອງພວກເຂົາ, ໃຫ້ຊີ້ແຈງເຫດຜົນກັບຜູ້ ຄົນ.

8 ໃຫ້ຜູ້ຮັບໃຊ້ຂອງເຮົາ ແຊມໂຍ ເອັຈ ສະມິດ ໄປກັບເຈົ້າ, ແລະ ຢ່າປະຖິ້ມລາວ, ແລະ ໃຫ້ຄຳແນະນຳຂອງເຈົ້າແກ່ລາວ; ແລະ ຄົນທີ່ຊື່ສັດຈະຖືກເຮັດໃຫ້ [ກ]ເຂັ້ມແຂງ ຂຶ້ນໃນທຸກບ່ອນ; ແລະ ເຮົາ, ພຣະຜູ້ເປັນ ເຈົ້າ, ຈະໄປກັບເຈົ້າ.

9 ຈົ່ງວາງ [ກ]ມືຂອງເຈົ້າໃສ່ເທິງຄົນທີ່ເຈັບ ປ່ວຍ, ແລະ ພວກເຂົາຈະ [ຂ]ຫາຍດີ. ຢ່າກັບ ຄືນມາຈົນກວ່າເຮົາ, ພຣະຜູ້ເປັນເຈົ້າ, ຈະ ສົ່ງເຈົ້າກັບ. ຈົ່ງອົດທົນໃນຄວາມທຸກຍາກ ລຳບາກ. ຈົ່ງ [ຄ]ໝັ່ນຂໍ, ແລ້ວພວກເຈົ້າຈະ ໄດ້ຮັບ; ຈົ່ງໝັ່ນເຄາະ, ແລ້ວຈະມີຜູ້ໄຂປະຕູ ໃຫ້ພວກເຈົ້າ.

10 ຢ່າສະແຫວງຫາທີ່ຈະເຮັດໃຫ້ຫຍຸ້ງ ຍາກເກີນຄວນ. ຈົ່ງປະຖິ້ມຄວາມບໍ່ຊອບ ທຳທຸກຢ່າງ. ຢ່າ [ກ]ຫລິ້ນຊູ້—ຊຶ່ງເປັນການ ລໍ້ລວງທີ່ໄດ້ສ້າງບັນຫາໃຫ້ເຈົ້າຕະຫລອດ ມາ.

11 ຈົ່ງ [ກ]ເຊື່ອຟັງຄຳກ່າວເຫລົ່ານີ້, ເພາະ ມັນຈິງ ແລະ ຊື່ສັດ; ແລະ ຈົ່ງຂະຫຍາຍໜ້າ ທີ່ຂອງເຈົ້າ, ແລະ ຊຸກຍູ້ຄົນທັງຫລາຍໃຫ້ ໄປສູ່ [ຂ]ຊີໂອນ ດ້ວຍ [ຄ]ເພງແຫ່ງຄວາມສຸກ ອັນເປັນນິດເທິງຫົວຂອງພວກເຂົາ.

12 ຈົ່ງ [ກ]ສືບຕໍ່ໃນສິ່ງເຫລົ່ານີ້ ແມ່ນແຕ່ ຈົນເຖິງທີ່ສຸດ, ແລະ ເຈົ້າຈະໄດ້ສວມ [ຂ]ມົງ ກຸດແຫ່ງຊີວິດນິລັນດອນ ຢູ່ທາງເບື້ອງຂວາ ພຣະຫັດຂອງພຣະບິດາຂອງເຮົາ, ຜູ້ທີ່ເຕັມ ໄປດ້ວຍພຣະຄຸນ ແລະ ຄວາມຈິງ.

13 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ ອົງເປັນ [ກ]ພຣະເຈົ້າຂອງເຈົ້າ, ພຣະຜູ້ໄຖ່ ຂອງເຈົ້າ, ແມ່ນແຕ່ພຣະເຢຊູຄຣິດໄດ້ກ່າວ ດັ່ງນີ້. ອາແມນ.

---

3 ກ ຢຄ 4:7; ອຫ 12:27.
5 ກ ມຣກ 16:15.
7 ກ ຄພ 75:6.
ຂ ຄມພ ປະຈັກພະຍານ.
8 ກ ຄພ 52:17; 133:58.
9 ກ ຄມພ ການປະຕິບັດຕໍ່ຄົນເຈັບປ່ວຍ; ມື, ການວາງ.
ຂ ມທ 9:18. ຄມພ ປິ່ນປົວ, ການປິ່ນປົວ.
ຄ ຢກບ 1:5.
10 ກ ຄມພ ຫລິ້ນຊູ້.
11 ກ ຄພ 35:24.
ຂ ຄພ 11:6.
ຄ ອຊຢ 35:10; ຄພ 45:71. ຄມພ ຮ້ອງ.
12 ກ 2 ຕມທ 3:14–15; 2 ນຟ 31:20.
ຂ ອຊຢ 62:3; ມທ 25:21; 1 ປຕ 5:4.
13 ກ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບຸດ.

# ພາກທີ 67

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ໃນຕົ້ນເດືອນພະຈິກ 1831. ເຫດການນັ້ນເປັນເຫດການຂອງກອງປະຊຸມໃຫຍ່ພິເສດ, ແລະ ການພິມຂອງການເປີດເຜີຍທີ່ໄດ້ຮັບມາແລ້ວຈາກພຣະຜູ້ເປັນເຈົ້າ ຜ່ານສາດສະດາໄດ້ຮັບການພິຈາລະນາ ແລະ ດຳເນີນການ (ເບິ່ງ ຫົວຂໍ້ຂອງ ພາກທີ 1). ວິວລຽມ ດັບເບີນຢູ ແຟັວສ໌ ຫາກໍໄດ້ຈັດຕັ້ງໂຮງພິມຂອງສາດສະໜາຈັກຂຶ້ນ ໃນເມືອງອິນດີເພັນເດັນສ໌, ລັດມີເຊີຣີ. ກອງປະຊຸມໃຫຍ່ໄດ້ຕັດສິນໃຈຈັດພິມການເປີດເຜີຍຢູ່ໃນ* Book of Commandments *(ປຶ້ມພຣະບັນຍັດ) ແລະ ໃຫ້ພິມ 10,000 ເຫລັ້ມ (ໂດຍທີ່ບໍ່ຮູ້ເຖິງສະພາບການທີ່ຍາກລຳບາກໃນພາຍໜ້າ ຈຶ່ງໄດ້ຕັດສິນໃຈພິມພຽງແຕ່ 3,000 ເຫລັ້ມ). ອ້າຍນ້ອງຫລາຍຄົນໄດ້ສະແດງປະຈັກພະຍານອັນໜັກແໜ້ນວ່າ ການເປີດເຜີຍທີ່ຮວບຮວມໄວ້ໃນເວລານັ້ນເພື່ອພິມເປັນປຶ້ມ ເປັນຄວາມຈິງ, ດັ່ງທີ່ພຣະວິນຍານບໍລິສຸດໄດ້ເປັນພະຍານແກ່ພວກເຂົາ. ປະຫວັດຂອງໂຈເຊັບ ສະມິດບັນທຶກວ່າ ຫລັງຈາກໄດ້ຮັບການເປີດເຜີຍທີ່ເອີ້ນກັນວ່າ ພາກທີ 1 ແລ້ວ, ໄດ້ມີການເວົ້າລົມບາງຢ່າງໃນທາງບໍ່ເຫັນດ້ວຍກ່ຽວກັບພາສາທີ່ໃຊ້ໃນການເປີດເຜີຍ. ການເປີດເຜີຍພາກນີ້ຈຶ່ງໄດ້ຕາມມາ.*

*1–3, ພຣະຜູ້ເປັນເຈົ້າໄດ້ຍິນຄຳອະທິຖານຂອງແອວເດີຂອງພຣະອົງ ແລະ ເຝົ້າດູແລພວກເຂົາ; 4–9, ພຣະອົງທ້າທາຍຄົນສະຫລາດທີ່ສຸດໃຫ້ຂຽນໃຫ້ເທົ່າກັບແມ່ນແຕ່ສ່ວນໜ້ອຍໜຶ່ງຂອງການເປີດເຜີຍຂອງພຣະອົງ; 10–14, ແອວເດີທີ່ຊື່ສັດຈະຖືກເຮັດໃຫ້ມີຊີວິດຊີວາໂດຍພຣະວິນຍານ ແລະ ເຫັນພຣະພັກຂອງພຣະເຈົ້າ.*

1 ຈົ່ງເບິ່ງ ແລະ ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າ [ກ]ແອວເດີຂອງສາດສະໜາຈັກຂອງເຮົາ, ຜູ້ໄດ້ມາຮ່ວມຊຸມນຸມນຳກັນ, ຜູ້ທີ່ເຮົາໄດ້ຍິນຄຳອະທິຖານ, ແລະ ຜູ້ທີ່ເຮົາຮູ້ໃຈ, ແລະ ຜູ້ທີ່ມີຄວາມປາດຖະໜາທີ່ຈະຂຶ້ນມາຢູ່ຕໍ່ໜ້າເຮົາ.

2 ຈົ່ງເບິ່ງ ແລະ ເບິ່ງແມ, [ກ]ຕາຂອງເຮົາຈ້ອງມອງພວກເຈົ້າຢູ່, ແລະ ສະຫວັນ ແລະ ແຜ່ນດິນໂລກຢູ່ໃນກຳມືຂອງເຮົາ, ແລະ ຄວາມຮັ່ງມີແຫ່ງຊົ່ວນິລັນດອນເປັນຂອງເຮົາທີ່ຈະມອບໃຫ້.

3 ພວກເຈົ້າພະຍາຍາມທີ່ຈະເຊື່ອວ່າ ພວກເຈົ້າຄວນໄດ້ຮັບພອນ ຊຶ່ງມອບໄວ້ໃຫ້ພວກເຈົ້າ; ແຕ່ຈົ່ງເບິ່ງ, ຕາມຄວາມຈິງແລ້ວເຮົາກ່າວກັບພວກເຈົ້າວ່າ ໄດ້ມີ [ກ]ຄວາມຢ້ານກົວໃນໃຈຂອງພວກເຈົ້າ, ແລະ ຕາມຄວາມຈິງແລ້ວ ນີ້ຄືເຫດຜົນທີ່ພວກເຈົ້າບໍ່ໄດ້ຮັບ.

4 ແລະ ບັດນີ້ ເຮົາ, ພຣະຜູ້ເປັນເຈົ້າ, ມອບ [ກ]ປະຈັກພະຍານແຫ່ງຄວາມຈິງເຖິງບັນຍັດເຫລົ່ານີ້ໃຫ້ແກ່ພວກເຈົ້າ ຊຶ່ງວາງຢູ່ຕໍ່ໜ້າພວກເຈົ້າ.

5 ຕາຂອງພວກເຈົ້າຈ້ອງມອງຢູ່ທີ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ [ກ]ພາສາຂອງລາວ ພວກເຈົ້າກໍຮູ້, ແລະ

**67** 1*ກ* ຄມພ ແອວເດີ.
2*ກ* ພສສ 34:15.
3*ກ* ຄມພ ຢ້ານກົວ, ຄວາມຢ້ານກົວ.
4*ກ* ຄມພ ຈິງ, ຄວາມຈິງ; ປະຈັກພະຍານ.
5*ກ* ຄພ 1:24.

ຄວາມ ບົກພ່ອງຂອງລາວ ພວກເຈົ້າກໍຮູ້; ແລະ ພວກເຈົ້າໄດ້ສະແຫວງຫາຄວາມຮູ້ ໃນໃຈຂອງພວກເຈົ້າ ເພື່ອວ່າພວກເຈົ້າຈະ ໄດ້ອະທິບາຍເກີນກວ່າພາສາຂອງລາວ; ສິ່ງນີ້ພວກເຈົ້າກໍຮູ້ຄືກັນ.

6 ບັດ ນີ້, ຈົ່ງ ຄົ້ນ ຫາ ຈາກ Book of Commandments (ປຶ້ມພຣະບັນຍັດ), ແມ່ນ ແຕ່ ສ່ວນເລັກ ໜ້ອຍ ທີ່ ສຸດໃນນັ້ນ, ແລະ ໃຫ້ກຳນົດຄົນໜຶ່ງທີ່ [ກ]ສະຫລາດທີ່ສຸດ ໃນບັນດາພວກເຈົ້າ;

7 ຫລື, ຖ້າຫາກມີຄົນ ໃດຄົນໜຶ່ງໃນບັນ ດາ ພວກ ເຈົ້າ ສາ ມາດ ຂຽນຂໍ້ຄວາມ ໃຫ້ ເໝືອນກັບປຶ້ມນັ້ນ, ແລ້ວ ພວກເຈົ້າກໍຖືກ ຕ້ອງແລ້ວທີ່ຈະເວົ້າວ່າ ພວກເຈົ້າບໍ່ຮູ້ວ່າປຶ້ມ ນັ້ນເປັນຄວາມຈິງ;

8 ແຕ່ຖ້າຫາກພວກເຈົ້າບໍ່ສາມາດຂຽນຂໍ້ ຄວາມໃຫ້ເໝືອນກັບປຶ້ມນັ້ນ, ພວກເຈົ້າກໍຢູ່ ພາຍໃຕ້ການກ່າວໂທດ ຖ້າຫາກພວກເຈົ້າ ບໍ່ໄດ້ [ກ]ເປັນພະຍານວ່າ ມັນເປັນຄວາມຈິງ.

9 ເພາະພວກເຈົ້າຮູ້ວ່າ ບໍ່ມີຄວາມບໍ່ຊອບ ທຳຢູ່ໃນປຶ້ມນັ້ນ, ແລະ ສິ່ງໃດທີ່ [ກ]ຊອບທຳ ແມ່ນລົງມາຈາກເບື້ອງເທິງ, ຈາກພຣະບິດາ ແຫ່ງ [ຂ]ຄວາມສະຫວ່າງ.

10 ແລະ ອີກເທື່ອໜຶ່ງ, ຕາມຄວາມ ຈິງ ແລ້ວ ເຮົາກ່າວກັບພວກເຈົ້າວ່າ ມັນເປັນ ສິດທິພິເສດຂອງພວກເຈົ້າ, ແລະ ຄຳສັນ ຍາຂໍ້ໜຶ່ງທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າຜູ້ ທີ່ໄດ້ຮັບການແຕ່ງຕັ້ງສູ່ການປະຕິບັດສາດ ສະໜາກິດນີ້, ຄືຕາບໃດທີ່ພວກເຈົ້າປົດ ເປື້ອງຕົນໃຫ້ພົ້ນຈາກ [ກ]ຄວາມອິດສາບັງ ບຽດ ແລະ [ຂ]ຄວາມຢ້ານກົວອອກຈາກຕົນ, ແລະ ນອບນ້ອມ [ຄ]ຖ່ອມຕົວລົງຢູ່ຕໍ່ໜ້າເຮົາ, ເພາະພວກເຈົ້າບໍ່ຖ່ອມຕົວພຽງພໍ, ແລ້ວ [ງ]ມ່ານຈະຖືກສີກອອກ ແລະ ພວກເຈົ້າ ຈະ [ຈ]ເຫັນເຮົາ ແລະ ຮູ້ວ່າເຮົາດຳລົງຢູ່— ບໍ່ແມ່ນດ້ວຍການມະລົນ ຫລື ດ້ວຍທຳມະ ຊາດຂອງຈິດໃຈ, ແຕ່ດ້ວຍຝ່າຍວິນຍານ.

11 ເພາະບໍ່ເຄີຍມີ [ກ]ມະນຸດຄົນໃດເຄີຍ ເຫັນພຣະເຈົ້າໃນເນື້ອໜັງເລີຍ ບໍ່ວ່າໃນ ເວລາໃດກໍຕາມ, ຍົກເວັ້ນແຕ່ໄດ້ຖືກເຮັດ ໃຫ້ມີຊີວິດຊີວາໂດຍພຣະວິນຍານຂອງ ພຣະເຈົ້າ.

12 ທັງບໍ່ມີ [ກ]ມະນຸດທີ່ມີຈິດໃຈທຳມະດາ ຄົນໃດສາມາດທົນຢູ່ຕໍ່ໜ້າທີ່ປະທັບຂອງ ພຣະເຈົ້າໄດ້, ທັງຈິດໃຈແຫ່ງການມະລົນກໍ ທົນບໍ່ໄດ້.

13 ພວກເຈົ້າບໍ່ສາມາດທົນຢູ່ຕໍ່ໜ້າທີ່ປະ ທັບຂອງພຣະເຈົ້າໄດ້ໃນຕອນນີ້, ທັງບໍ່ສາ ມາດທົນກັບການປະຕິບັດຂອງເຫລົ່າທູດ; ດັ່ງນັ້ນ, ຈົ່ງດຳເນີນຕໍ່ໄປດ້ວຍ [ກ]ຄວາມອົດ ທົນຈົນກວ່າພວກເຈົ້າຈະຖືກເຮັດໃຫ້ [ຂ]ດີ ພ້ອມ.

14 ຢ່າໃຫ້ຈິດໃຈຂອງພວກເຈົ້າຫັນກັບ ໄປ; ແລະ ເມື່ອພວກເຈົ້າມີ [ກ]ຄ່າຄວນ, ໃນ ເວລາອັນເໝາະສົມຂອງເຮົາເອງ, ພວກ ເຈົ້າຈະໄດ້ເຫັນ ແລະ ຮູ້ສິ່ງທີ່ໄດ້ມອບໃຫ້ ພວກເຈົ້າໂດຍມືຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ. ອາແມນ.

6 *ກ* 2 ນຟ 9:28–29, 42.
8 *ກ* ຄມພ ພະຍານ.
9 *ກ* ມຣນ 7:15–18.
*ຂ* ຢກບ 1:17; ຄພ 50:24; 84:45; 88:49.
10 *ກ* ຄມພ ຫຶງຫວງ, ຄວາມຫຶງຫວງ.
*ຂ* ຄມພ ຢ້ານກົວ, ຄວາມຢ້ານກົວ.
*ຄ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ງ* ຄມພ ມ່ານ.
*ຈ* ຄພ 88:68; 93:1; 97:16.
11 *ກ* ປຈສ ອພຍ 33:20, 23 (ພາກທ້ອຍທ້າຍ); ຢຮ 1:18; 6:46; ປຈສ 1 ຢຮ 4:12 (ພາກທ້ອຍທ້າຍ); ຄພ 84:19–22; ມຊ 1:11, 14.
12 *ກ* ມຊຢ 3:19. ຄມພ ມະນຸດທີ່ມີຈິດໃຈທຳມະດາ.
13 *ກ* ຣມ 2:7. ຄມພ ອົດທົນ, ຄວາມອົດທົນ.
*ຂ* ມທ 5:48; 3 ນຟ 12:48.
14 *ກ* ຄມພ ຄ່າຄວນ, ການມີຄ່າຄວນ.

# ພາກທີ 68

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 1 ເດືອນພະຈິກ, 1831, ໃນການຕອບຄຳອະທິຖານທີ່ ຂໍໃຫ້ພຣະປະສົງຂອງພຣະຜູ້ເປັນເຈົ້າ ເປັນທີ່ຮູ້ຈັກ ກ່ຽວກັບ ອໍສັນ ຮາຍດ໌, ລຸກ ແອັສ ຈອນສັນ, ໄລມັນ ອີ ຈອນສັນ, ແລະ ວິວລຽມ ອີ ມິກລີລິນ. ເຖິງແມ່ນວ່າ ພາກສ່ວນໜຶ່ງຂອງການເປີດເຜີຍນີ້ແມ່ນເຈາະຈົງໃສ່ຜູ້ຊາຍສີ່ຄົນ, ແຕ່ສ່ວນໃຫຍ່ແມ່ນກ່ຽວກັບທັງສາດສະໜາຈັກ. ການເປີດເຜີຍນີ້ ໄດ້ຖືກຂະຫຍາຍອອກກວ້າງ ຕາມພາຍໃຕ້ການຊີ້ນຳຂອງໂຈເຊັບ ສະມິດ ເມື່ອຄຳສອນ ແລະ ພັນທະສັນຍາ ໄດ້ຖືກຈັດພິມຊຸດສະບັບ 1835.*

*1–5, ຖ້ອຍຄຳຂອງພວກແອວເດີເມື່ອໄດ້ຮັບການດົນໃຈໂດຍພຣະວິນຍານບໍລິສຸດ ເປັນພຣະຄຳພີ; 6–12, ພວກແອວເດີຕ້ອງສັ່ງສອນ ແລະ ໃຫ້ບັບຕິສະມາ, ແລະ ເຄື່ອງໝາຍຈະຕິດຕາມຜູ້ເຊື່ອທີ່ແທ້ຈິງ; 13–24, ລູກຊາຍກົກໃນບັນດາພວກລູກຊາຍຂອງອາໂຣນສາມາດຮັບໃຊ້ເປັນອະທິການຜູ້ຄວບຄຸມ (ນັ້ນຄື, ມີຂໍກະແຈຂອງຝ່າຍປະທານໃນຖານະເປັນອະທິການ) ພາຍໃຕ້ການຊີ້ນຳຂອງຝ່າຍປະທານສູງສຸດ; 25–28, ພໍ່ແມ່ໄດ້ຮັບບັນຊາໃຫ້ສິດສອນພຣະກິດຕິຄຸນແກ່ລູກໆຂອງຕົນ; 29–35, ໄພ່ພົນຂອງພຣະເຈົ້າຕ້ອງຮັກສາວັນຊະບາໂຕ, ທຳງານຢ່າງພາກພຽນ, ແລະ ອະທິຖານ.*

1 ຜູ້ຮັບໃຊ້ຂອງເຮົາ, ອໍສັນ ຮາຍດ໌, ໄດ້
ຖືກ ເອີ້ນ ໂດຍການ ແຕ່ງຕັ້ງ ຂອງ ລາວ ໃຫ້
ປະກາດພຣະກິດຕິຄຸນອັນເປັນນິດ, ໂດຍ
[ກ]ພຣະວິນຍານຂອງພຣະເຈົ້າທີ່ຊົງພຣະ
ຊົນຢູ່, ຈາກຜູ້ຄົນກຸ່ມໜຶ່ງຫາຜູ້ຄົນອີກກຸ່ມ
ໜຶ່ງ, ແລະ ຈາກແຜ່ນດິນໜຶ່ງຫາອີກແຜ່ນ
ດິນໜຶ່ງ, ໃນບ່ອນຊຸມນຸມຂອງຄົນຊົ່ວ, ໃນ
ທຳມະສາລາຂອງພວກເຂົາ, ໂດຍຊີ້ແຈງ
ເຫດຜົນ ແລະ ອະທິບາຍພຣະຄຳພີທັງໝົດ
ແກ່ພວກເຂົາ.
2 ແລະ, ຈົ່ງ ເບິ່ງ, ແລະ ເບິ່ງ ແມ, ສິ່ງ ນີ້
ຄື ແບບ ຢ່າງ ໃຫ້ ແກ່ ທຸກຄົນ ຜູ້ ໄດ້ ຮັບ ການ
ແຕ່ງຕັ້ງຕໍ່ຖານະປະໂລຫິດນີ້, ຜູ້ຊຶ່ງຖືກກຳ
ນົດໃຫ້ອອກໄປເຮັດພາລະກິດຂອງພວກ
ເຂົາ—
3 ແລະ ນີ້ຄືແບບຢ່າງໃຫ້ແກ່ພວກເຂົາ,
ວ່າພວກເຂົາຈະ [ກ]ກ່າວດັ່ງທີ່ໄດ້ຮັບການ
ດົນໃຈໂດຍພຣະວິນຍານບໍລິສຸດ.
4 ແລະ ສິ່ງໃດກໍຕາມທີ່ພວກເຂົາຈະກ່າວ
ເມື່ອໄດ້ຮັບການດົນໃຈໂດຍ [ກ]ພຣະວິນ
ຍານບໍລິສຸດ ຈະເປັນພຣະຄຳພີ, ຈະເປັນ
ພຣະປະສົງຂອງພຣະຜູ້ເປັນເຈົ້າ, ຈະເປັນ
ພຣະດຳລັດຂອງພຣະຜູ້ເປັນເຈົ້າ, ຈະເປັນ
ພຣະຄຳຂອງພຣະຜູ້ເປັນເຈົ້າ, ຈະເປັນສຸ
ລະສຽງຂອງພຣະຜູ້ເປັນເຈົ້າ, ແລະ ເປັນ
[ຂ]ອຳນາດຂອງພຣະເຈົ້າໄປສູ່ຄວາມລອດ.
5 ຈົ່ງເບິ່ງ, ນີ້ຄືຄຳສັນຍາຂອງພຣະຜູ້ເປັນ
ເຈົ້າແກ່ພວກເຈົ້າ, ໂອ້ ພວກເຈົ້າຜູ້ຮັບໃຊ້
ຂອງເຮົາ.
6 ດັ່ງນັ້ນ, ຈົ່ງ ເບີກບານ ເຖີດ, ແລະ ຢ່າ

**68** 1*ກ* ຄມພ ພຣະວິນຍານບໍລິສຸດ.
3*ກ* 2 ປຕ 1:21; ຄພ 18:32; 42:16; 100:5.
4*ກ* ຄມພ ເປີດເຜີຍ, ການເປີດເຜີຍ; ພຣະວິນຍານບໍລິສຸດ.
*ຂ* ຣມ 1:16.

ສູ່ [ກ]ຢ້ານ, ເພາະເຮົາພຣະຜູ້ເປັນເຈົ້າຢູ່ກັບ
ພວກເຈົ້າ, ແລະ ຈະຢືນ ຢູ່ກັບພວກເຈົ້າ;
ແລະ ພວກເຈົ້າຈະເປັນພະຍານເຖິງເຮົາ,
ແມ່ນ ແຕ່ພຣະເຢຊູຄຣິດ, ວ່າ ເຮົາ ຄືພຣະ
ບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ວ່າເຮົາ
ເຄີຍເປັນຢູ່, ວ່າເຮົາເປັນຢູ່, ແລະ ວ່າເຮົາ
ຈະມາ.
7 ນີ້ ຄື ພຣະ ຄຳ ຂອງ ພຣະ ຜູ້ ເປັນ ເຈົ້າ
ແກ່ພວກເຈົ້າ, ຜູ້ຮັບໃຊ້ຂອງເຮົາ [ກ]ອໍສັນ
ຮາຍດ໌, ແລະ ແກ່ຜູ້ຮັບໃຊ້ຂອງ ເຮົາ ລຸກ
ຈອນສັນ, ແລະ ແກ່ຜູ້ຮັບໃຊ້ຂອງເຮົາ ໄລ
ມັນ ຈອນສັນ, ແລະ ແກ່ ຜູ້ ຮັບ ໃຊ້ ຂອງ
ເຮົາ ວິວລຽມ ອີ ມິກລີລິນ, ແລະ ແກ່ພວກ
ແອວເດີທັງໝົດໃນສາດສະໜາຈັກຂອງ
ເຮົານຳອີກ—
8 ພວກເຈົ້າຈົ່ງອອກ [ກ]ໄປທົ່ວໂລກ, [ຂ]ສັ່ງ
ສອນ ພຣະ ກິດຕິຄຸນ ຕໍ່ [ຄ]ມະນຸດສະ ໂລກ
ທັງໝົດ, ໂດຍກະທຳໃນ [ງ]ສິດອຳນາດ ຊຶ່ງ
ເຮົາໄດ້ມອບໃຫ້ພວກເຈົ້າ, ໂດຍໃຫ້ [ຈ]ບັບຕິ
ສະມາໃນພຣະນາມຂອງພຣະບິດາ, ແລະ
ຂອງພຣະບຸດ, ແລະ ຂອງພຣະວິນຍານບໍ
ລິສຸດ.
9 ແລະ [ກ]ຄົນ ໃດ ທີ່ ເຊື່ອ ແລະ ຮັບ ບັບຕິ
ສະມາຈະ [ຂ]ລອດ, ແລະ ຄົນໃດທີ່ບໍ່ເຊື່ອຈະ
[ຄ]ອັບປະໂຫຍດ.
10 ແລະ ຄົນ ໃດ ທີ່ ເຊື່ອ ຈະ ໄດ້ ຮັບ ພອນ
ດ້ວຍ [ກ]ເຄື່ອງໝາຍທີ່ຕິດຕາມມາ, ແມ່ນແຕ່
ດັ່ງທີ່ມີຂຽນໄວ້.
11 ແລະ ແກ່ພວກເຈົ້າ ມັນຈະຖືກມອບ
ໃຫ້ ເພື່ອຈະ ໄດ້ຮູ້ [ກ]ເຄື່ອງໝາຍ ແຫ່ງການ
ເວລາ, ແລະ ເຄື່ອງໝາຍແຫ່ງການສະເດັດ
ມາຂອງບຸດມະນຸດ;
12 ແລະ ຫລາຍຕໍ່ຫລາຍເທື່ອດັ່ງທີ່ພຣະ
ບິດາຈະເປັນພະຍານເຖິງ, ພວກເຈົ້າຈະໄດ້
ຮັບອຳນາດໃຫ້ [ກ]ຜະນຶກ ພວກເຂົາສູ່ຊີວິດ
ນິລັນດອນ. ອາແມນ.
13 ແລະ ບັດນີ້, ກ່ຽວກັບ ເລື່ອງທີ່ນອກ
ເໜືອໄປຈາກພັນທະສັນຍາ ແລະ ບັນຍັດ
ແລ້ວ, ມີເລື່ອງດັ່ງຕໍ່ໄປນີ້—
14 ມີຢູ່ໃນພາຍໜ້າ, ໃນເວລາຂອງພຣະ
ຜູ້ເປັນເຈົ້າເອງ, [ກ]ອະທິການຄົນອື່ນໆຈະ
ຖືກແຕ່ງຕັ້ງເປັນທາງການໃຫ້ແກ່ສາດສະ
ໜາຈັກ, ເພື່ອປະຕິບັດແມ່ນແຕ່ຄືກັນກັບ
ຄົນທຳອິດ;
15 ດັ່ງນັ້ນ ພວກເຂົາຈະເປັນ [ກ]ມະຫາປະ
ໂລຫິດ ຜູ້ມີຄຸນຄ່າ, ແລະ ພວກເຂົາຈະໄດ້
ຮັບການກຳນົດໂດຍ [ຂ]ຝ່າຍປະທານສູງສຸດ
ຂອງຖານະປະໂລຫິດແຫ່ງເມນຄີເສເດັກ,
ຍົກເວັ້ນແຕ່ພວກເຂົາມາຈາກຕະກຸນໂດຍ
ແທ້ຂອງ [ຄ]ອາໂຣນເທົ່ານັ້ນ.
16 ແລະ ຖ້າຫາກພວກເຂົາມາຈາກຕະ
ກຸນໂດຍແທ້ຂອງ [ກ]ອາໂຣນ, ພວກເຂົາຈະ
ມີສິດອັນຖືກຕ້ອງຕາມກົດຕໍ່ການເປັນອະທິ
ການ, ຖ້າຫາກພວກເຂົາເປັນລູກຊາຍກົກ
ໃນບັນດາພວກລູກຊາຍຂອງອາໂຣນ;
17 ເພາະ ລູກ ຊາຍ ກົກ ມີ ສິດ ຂອງ ການ

6 ກ ອຊຢ 41:10.
7 ກ ຄມພ ຮາຍດ໌, ອໍສັນ.
8 ກ ຄພ 1:2; 63:37.
ຂ ຄມພ ສັ່ງສອນ; ວຽກງານເຜີຍແຜ່.
ຄ ມຣກ 16:15.
ງ ຄມພ ສິດອຳນາດ.
ຈ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
9 ກ ມຣກ 16:16; ຄພ 20:25.
ຂ ຄມພ ລອດ, ຄວາມລອດ.
ຄ ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
10 ກ ຄມພ ເຄື່ອງໝາຍ.
11 ກ ຄມພ ເຄື່ອງໝາຍ ແຫ່ງການເວລາ.
12 ກ ຄພ 1:8; 132:49.
ຄມພ ຜະນຶກ, ການຜະນຶກ.
14 ກ ຄມພ ອະທິການ.
15 ກ ຄພ 72:1.
ຂ ຄມພ ຝ່າຍປະທານສູງສຸດ.
ຄ ຄມພ ອາໂຣນ, ອ້າຍຂອງໂມເຊ.
16 ກ ຄພ 107:15–17.
ຄມພ ຖານະປະໂລຫິດແຫ່ງອາໂຣນ.

ເປັນ ປະທານຄວບຄຸມຖານະປະໂລຫິດ, ແລະ ມີ [ກ]ຂໍກະແຈ ຫລື ສິດອຳນາດອັນດຽວກັນນັ້ນ.

18 ບໍ່ມີມະນຸດຄົນໃດມີສິດຢ່າງຖືກຕ້ອງຕາມກົດ ຕໍ່ຕຳແໜ່ງນີ້, ທີ່ມີຂໍກະແຈຂອງຖານະປະໂລຫິດນີ້, ຍົກເວັ້ນແຕ່ເຂົາເປັນຕະກຸນໂດຍແທ້ ແລະ ເປັນລູກຊາຍກົກຂອງ [ກ]ລູກຫລານຂອງອາໂຣນເທົ່ານັ້ນ.

19 ແຕ່, ເນື່ອງຈາກວ່າ [ກ]ມະຫາປະໂລຫິດຂອງຖານະປະໂລຫິດແຫ່ງເມນຄີເສເດັກມີສິດອຳນາດທີ່ຈະປະຕິບັດໜ້າທີ່ ທີ່ຕ່ຳກວ່າທຸກຢ່າງ, ເຂົາຈຶ່ງສາມາດປະຕິບັດໃນຕຳແໜ່ງຂອງ [ຂ]ອະທິການໄດ້ ເມື່ອຫາຕະກຸນໂດຍກົງຂອງອາໂຣນບໍ່ໄດ້, ໂດຍໃຫ້ເຂົາໄດ້ຮັບການເອີ້ນ ແລະ ຖືກແຕ່ງຕັ້ງເປັນທາງການ ແລະ ຖືກແຕ່ງຕັ້ງສູ່ອຳນາດນີ້, ພາຍໃຕ້ມືຂອງຝ່າຍປະທານສູງສຸດຂອງຖານະປະໂລຫິດແຫ່ງເມນຄີເສເດັກ.

20 ແລະ ຕະກຸນໂດຍແທ້ຂອງອາໂຣນຄືກັນ, ຈະຕ້ອງໄດ້ຮັບການມອບໝາຍໂດຍຝ່າຍປະທານນີ້ກ່ອນ, ແລະ ພົບວ່າມີຄ່າຄວນ, ແລະ ຖືກ [ກ]ເຈີມ, ແລະ [ຂ]ແຕ່ງຕັ້ງພາຍໃຕ້ມືຂອງຝ່າຍປະທານນີ້, ຖ້າບໍ່ດັ່ງນັ້ນ ພວກເຂົາຈະບໍ່ມີສິດອຳນາດທີ່ຖືກຕ້ອງຕາມກົດ ທີ່ຈະປະຕິບັດໃນຖານະປະໂລຫິດຂອງພວກເຂົາ.

21 ແຕ່, ໂດຍການອີງຕໍ່ຄຳສັ່ງກ່ຽວກັບສິດທິຂອງພວກເຂົາໃນຖານະປະໂລຫິດທີ່ສືບຕໍ່ຈາກພໍ່ໄປຫາລູກຊາຍ, ພວກເຂົາຈຶ່ງສາມາດທວງເອົາການເຈີມຂອງພວກເຂົາໄດ້ ຖ້າຫາກໃນເວລາໃດກໍຕາມທີ່ພວກເຂົາສາມາດພິສູດເຖິງການເປັນທາຍາດຂອງພວກເຂົາ, ຫລື ຮູ້ຈັກໂດຍການເປີດເຜີຍຈາກພຣະຜູ້ເປັນເຈົ້າ ພາຍໃຕ້ມືຂອງຝ່າຍປະທານ ດັ່ງທີ່ກ່າວຜ່ານມານັ້ນ.

22 ແລະ ອີກເທື່ອໜຶ່ງ, ຈະບໍ່ມີອະທິການ ຫລື ມະຫາປະໂລຫິດຄົນໃດ ຜູ້ຈະໄດ້ຮັບການແຕ່ງຕັ້ງເປັນທາງການເພື່ອປະຕິບັດສາດສະໜາກິດ ຈະຖືກສອບສວນ ຫລື ກ່າວໂທດສຳລັບຄວາມຜິດໃດໆ, ເວັ້ນເສຍແຕ່ຈະຢູ່ຕໍ່ໜ້າ [ກ]ຝ່າຍປະທານສູງສຸດຂອງສາດສະໜາຈັກເທົ່ານັ້ນ;

23 ແລະ ຕາບໃດທີ່ເຂົາຖືກພົບວ່າມີຄວາມຜິດຢູ່ຕໍ່ໜ້າຝ່າຍປະທານນີ້, ໂດຍປະຈັກພະຍານທີ່ແກ້ຕົວບໍ່ໄດ້, ແລ້ວເຂົາຈະຖືກກ່າວໂທດ;

24 ແລະ ຖ້າຫາກເຂົາກັບໃຈ ເຂົາຈະໄດ້ຮັບການ [ກ]ໃຫ້ອະໄພ, ອີງຕາມພັນທະສັນຍາ ແລະ ບັນຍັດ ຂອງສາດສະໜາຈັກ.

25 ແລະ ອີກເທື່ອໜຶ່ງ, ຕາບໃດທີ່ [ກ]ພໍ່ແມ່ມີລູກໆຢູ່ໃນຊີໂອນ, ຫລື ໃນ [ຂ]ສະເຕກໜຶ່ງສະເຕກໃດຂອງນາງ ຊຶ່ງໄດ້ຖືກຈັດຕັ້ງຂຶ້ນ, ທີ່ບໍ່ໄດ້ [ຄ]ສິດສອນເຂົາໃຫ້ເຂົ້າໃຈຄຳສອນເລື່ອງການກັບໃຈ, ສັດທາໃນພຣະຄຣິດພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ແລະ ເລື່ອງການຮັບບັບຕິສະມາ ແລະ ຮັບຂອງປະທານແຫ່ງພຣະວິນຍານບໍລິສຸດໂດຍການວາງມື, ເມື່ອເຂົາມີອາຍຸ [ງ]ແປດປີ, ແລ້ວ [ຈ]ບາບຈະຕົກຢູ່ເທິງຫົວຂອງຜູ້ເປັນພໍ່ແມ່.

---

17 *ກ* ຄມພ ຂໍກະແຈຂອງຖານະປະໂລຫິດ.
18 *ກ* ອພຍ 40:12–15; ຄພ 84:18; 107:13–16, 70–76.
19 *ກ* ຄມພ ມະຫາປະໂລຫິດ.
*ຂ* ຄມພ ອະທິການ.
20 *ກ* ຄມພ ເຈີມ, ການເຈີມ.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
22 *ກ* ຄມພ ຝ່າຍປະທານສູງສຸດ.
24 *ກ* ຄມພ ອະໄພ, ໃຫ້ອະໄພ.
25 *ກ* ຄມພ ຄອບຄົວ—ໜ້າທີ່ຮັບຜິດຊອບຂອງພໍ່ແມ່.
*ຂ* ຄມພ ສະເຕກ.
*ຄ* ຄມພ ສອນ, ຜູ້ສອນ, ຄູສອນ.
*ງ* ຄພ 18:42; 20:71.
*ຈ* ຢຄ 1:19; ຄພ 29:46–48.

26 ເພາະນີ້ຈະເປັນກົດສຳລັບຜູ້ອາໄສ
ຂອງ [ກ]ຊີໂອນ, ຫລື ໃນສະເຕກໜຶ່ງສະເຕກ
ໃດຂອງນາງ ຊຶ່ງໄດ້ຖືກຈັດຕັ້ງຂຶ້ນແລ້ວ.
27 ແລະ ລູກໆຂອງພວກເຂົາຈະຕ້ອງ
ຮັບ [ກ]ບັບຕິສະມາເພື່ອ [ຂ]ການປົດບາບຂອງ
ພວກເຂົາ ເມື່ອມີອາຍຸໄດ້ [ຄ]ແປດປີ, ແລະ
ໄດ້ຮັບການວາງມື.
28 ແລະ ພວກເຂົາຈະຕ້ອງສິດສອນ
ລູກໆຂອງພວກເຂົາໃຫ້ [ກ]ອະທິຖານ, ແລະ
ເດີນໄປຢ່າງພາກພູມໃຈຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າ.
29 ແລະ ຜູ້ອາໄສຂອງຊີໂອນຈະຕ້ອງ
ຮັກສາວັນ [ກ]ຊະບາໂຕໃຫ້ສັກສິດ.
30 ແລະ ຜູ້ອາໄສຂອງຊີໂອນຈະຕ້ອງຈື່
ຈຳວຽກງານຂອງພວກເຂົານຳອີກ, ຕາບ
ໃດທີ່ພວກເຂົາໄດ້ຖືກກຳນົດໃຫ້ທຳງານ,
ດ້ວຍສຸດຄວາມຊື່ສັດ; ເພາະຄົນກຽດຄ້ານ
ຈະຖືກຈົດຈຳຢູ່ຕໍ່ພຣະພັກຂອງພຣະຜູ້ເປັນ
ເຈົ້າ.
31 ບັດນີ້, ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ພໍໃຈ
ຫລາຍກັບຜູ້ອາໄສຂອງຊີໂອນ, ເພາະມີຄົນ
[ກ]ກຽດຄ້ານໃນບັນດາພວກເຂົາ; ແລະ ລູກໆ
ຂອງພວກເຂົາກໍໄດ້ເຕີບໂຕຂຶ້ນໃນ [ຂ]ຄວາມ
ຊົ່ວຮ້າຍ; ພວກເຂົາບໍ່ໄດ້ [ຄ]ສະແຫວງຫາ
ຄວາມຮັ່ງມີແຫ່ງຊົ່ວນິລັນດອນຢ່າງພາກ
ພຽນ, ແຕ່ສາຍຕາຂອງພວກເຂົາເຕັມໄປ
ດ້ວຍຄວາມໂລບມາກໂລພາ.
32 ສິ່ງເຫລົ່ານີ້ບໍ່ຄວນເປັນ, ແລະ ຕ້ອງ
ໃຫ້ໝົດສິ້ນໄປໃນບັນດາພວກເຂົາ; ດັ່ງນັ້ນ,
ໃຫ້ຜູ້ຮັບໃຊ້ຂອງເຮົາ ອໍລິເວີ ຄາວເດີຣີ ນຳ
ຄຳກ່າວເຫລົ່ານີ້ໄປຍັງແຜ່ນດິນຊີໂອນ.
33 ແລະ ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້
ພວກເຂົາ—ວ່າຄົນທີ່ບໍ່ໄດ້ຍຶດຖືທີ່ຈະ [ກ]ອະ
ທິຖານຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ
ຕາມເວລາດັ່ງນັ້ນ, ກໍໃຫ້ເຂົາຖືກ [ຂ]ຈື່ຈຳຢູ່ຕໍ່
ໜ້າຜູ້ພິພາກສາຂອງຜູ້ຄົນຂອງເຮົາ.
34 [ກ]ຄຳກ່າວເຫລົ່ານີ້ແມ່ນຈິງ ແລະ ຊື່
ສັດ; ດັ່ງນັ້ນ, ຢ່າລ່ວງລະເມີດມັນ, ທັງບໍ່ໃຫ້
[ຂ]ຕັດມັນອອກ.
35 ຈົ່ງເບິ່ງ, ເຮົາຄື [ກ]ອາລະຟາ ແລະ ໂອ
ເມຄາ, ແລະ ເຮົາ [ຂ]ມາຢ່າງໄວ. ອາແມນ.

---

# ພາກທີ 69

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 11 ເດືອນພະຈິກ, 1831. ການເປີດເຜີຍທີ່ຖືກຮວບຮວມໄວ້ໂດຍຕັ້ງໃຈທີ່ຈະພິມໃນບໍ່ດົນນັ້ນໄດ້ຮັບການເຫັນພ້ອມຢູ່ທີ່ກອງປະຊຸມໃຫຍ່ພິເສດ ໃນວັນທີ 1–2 ເດືອນພະຈິກ. ໃນວັນທີ 3, ການເປີດເຜີຍໃນນີ້ຖືກຕື່ມໃສ່ອີກເປັນພາກທີ 133, ຕໍ່ມາ ພາກທ້ອຍ*

26 *ກ* ຄມພ ຊີໂອນ.
27 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* ຄມພ ປົດບາບ, ການປົດບາບ.
*ຄ* ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
28 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
29 *ກ* ຄພ 59:9–12. ຄມພ ວັນຊະບາໂຕ.
31 *ກ* ຄມພ ກຽດຄ້ານ, ຄວາມກຽດຄ້ານ.
*ຂ* ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
*ຄ* ຄພ 6:7.
33 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຂ* ຄມພ ຕິສອນ, ການຕິສອນ; ພິພາກສາ, ການພິພາກສາ, ຜູ້ພິພາກສາ.
34 *ກ* ພນມ 22:6.
*ຂ* ຄພ 20:35; 93:24–25.
35 *ກ* ຄມພ ອາລະຟາ ແລະ ໂອເມຄາ.
*ຂ* ຄພ 1:12.

*ທ້າຍ ໄດ້ຖືກຕື່ມໃສ່. ອໍລີເວີ ຄາວເດີຣີ ໄດ້ຖືກມອບໝາຍລ່ວງໜ້າແລ້ວ ໃຫ້ນຳເອົາຕົ້ນສະບັບການເປີດເຜີຍ ແລະ ພຣະບັນຍັດທີ່ຮວບຮວມໄວ້ແລ້ວໄປພິມທີ່ເມືອງອິນດີເພັນເດັນສ໌, ລັດມີເຊີຣີ. ລາວຕ້ອງເອົາເງິນທີ່ໄດ້ຮັບບໍລິຈາກສຳລັບການເສີມສ້າງສາດສະໜາຈັກຢູ່ໃນລັດມີເຊີຣີໄປດ້ວຍ. ການເປີດເຜີຍນີ້ ແນະນຳຈອນ ວິດເມີ ໃຫ້ເດີນທາງໄປກັບອໍລີເວີ ຄາວເດີຣີ ແລະ ກໍຍັງແນະນຳທ່ານວິດເມີ ໃຫ້ເດີນທາງ ແລະ ຮວບຮວມເລື່ອງລາວປະຫວັດສາດ ໃນການເອີ້ນຂອງເພິ່ນ ໃນຖານະທີ່ເປັນນັກປະຫວັດສາດ ແລະ ຜູ້ບັນທຶກຂອງສາດສະໜາຈັກ.*

*1–2, ຈອນ ວິດເມີ ຕ້ອງເດີນທາງໄປລັດມີເຊີຣີກັບ ອໍລີເວີ ຄາວເດີຣີ; 3–8, ລາວຕ້ອງໄດ້ສັ່ງສອນ ແລະ ເກັບກຳ, ບັນທຶກ, ແລະ ຂຽນເລື່ອງລາວປະຫວັດສາດໄວ້ນຳອີກ.*

1 ຈົ່ງເຊື່ອຟັງເຮົາ, ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງເຈົ້າໄດ້ກ່າວ, ເພາະ
ເຫັນແກ່ຜູ້ຮັບໃຊ້ຂອງເຮົາ [ກ]ອໍລີເວີ ຄາວ
ເດີຣີ. ເຮົາເຫັນວ່າມັນບໍ່ໄດ້ເປັນຄວາມ
ສະຫລຽວສະຫລາດ ທີ່ລາວຈະໄດ້ຮັບການ
ຝາກຝັງດ້ວຍບັນຍັດ ແລະ ດ້ວຍເງິນ ຊຶ່ງ
ລາວຈະຕ້ອງເອົາໄປຫາແຜ່ນດິນຊີໂອນ,
ຍົກເວັ້ນແຕ່ມີຄົນໜຶ່ງໄປກັບລາວ ຄົນທີ່ຈິງ
ຈັງ ແລະ ຊື່ສັດ.
2 ດັ່ງນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ປະສົງ
ໃຫ້ຜູ້ຮັບໃຊ້ຂອງເຮົາ, [ກ]ຈອນ ວິດເມີ, ໄປ
ກັບຜູ້ຮັບໃຊ້ຂອງເຮົາ ອໍລີເວີ ຄາວເດີຣີ;
3 ແລະ ພ້ອມນີ້ກໍໃຫ້ລາວສືບຕໍ່ຂຽນ ແລະ
ບັນທຶກ [ກ]ປະຫວັດສາດຂອງທຸກເລື່ອງທີ່ສຳ
ຄັນ ຊຶ່ງລາວຈະສັງເກດເຫັນ ແລະ ຮູ້ກ່ຽວ
ກັບສາດສະໜາຈັກຂອງເຮົາ;
4 ແລະ ພ້ອມນີ້ກໍໃຫ້ລາວໄດ້ຮັບ [ກ]ຄຳ
ແນະນຳ ແລະ ຄວາມຊ່ວຍເຫລືອຈາກຜູ້
ຮັບໃຊ້ຂອງເຮົາ ອໍລີເວີ ຄາວເດີຣີ ແລະ ຄົນ
ອື່ນໆນຳອີກ.
5 ແລະ ພ້ອມນີ້, ຜູ້ຮັບໃຊ້ຂອງເຮົາທີ່ຢູ່
ທົ່ວໄປໃນແຜ່ນດິນໂລກຄວນສົ່ງເລື່ອງ
ລາວກ່ຽວກັບ [ກ]ການພິທັກຮັກສາຂອງພວກ
ເຂົາໄປຍັງແຜ່ນດິນຊີໂອນນຳອີກ;
6 ເພາະແຜ່ນດິນຊີໂອນຈະເປັນແຫລ່ງ
ແລະ ສະຖານທີ່ຮັບ ແລະ ເຮັດທຸກສິ່ງ
ເຫລົ່ານີ້ທັງໝົດ.
7 ເຖິງຢ່າງໃດກໍຕາມ, ໃຫ້ຜູ້ຮັບໃຊ້ຂອງ
ເຮົາ ຈອນ ວິດເມີ ເດີນທາງຫລາຍເທື່ອ
ຈາກບ່ອນໜຶ່ງໄປຫາອີກບ່ອນໜຶ່ງ, ແລະ
ຈາກໜ່ວຍຂອງສາດສະໜາຈັກໜຶ່ງໄປ
ຫາອີກໜ່ວຍໜຶ່ງ, ເພື່ອວ່າລາວຈະໄດ້ຮັບ
ຄວາມຮູ້ງ່າຍຂຶ້ນ—
8 ໂດຍສັ່ງສອນ ແລະ ອະທິບາຍ, ຂຽນ,
ກ່າຍ, ເລືອກ, ແລະ ຮັບເອົາທຸກສິ່ງທັງ
ປວງ ທີ່ຈະເປັນປະໂຫຍດໃຫ້ແກ່ສາດສະ
ໜາຈັກ, ແລະ ເພື່ອຄົນລຸ້ນໃໝ່ທີ່ຈະເຕີບ
ໂຕຂຶ້ນໃນແຜ່ນດິນ [ກ]ຊີໂອນ, ຈະໄດ້ຮັບ
ມັນ ຈາກລຸ້ນສູ່ລຸ້ນ, ຕະຫລອດການ ແລະ
ຕະຫລອດໄປ. ອາແມນ.

**69** 1 *ກ* ຄມພ ຄາວເດີຣີ, ອໍລີເວີ.
2 *ກ* ຄມພ ວິດເມີ, ຈອນ.
3 *ກ* ຄພ 47:1–3; 85:1.
4 *ກ* ຄມພ ຄຳແນະນຳ.
5 *ກ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
8 *ກ* ຄມພ ຊີໂອນ.

# ພາກທີ 70

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 12 ເດືອນພະຈິກ, 1831. ປະຫວັດຂອງສາດສະດາ ບອກວ່າ ກອງປະຊຸມໃຫຍ່ພິເສດສີ່ຄັ້ງຖືກຈັດຂຶ້ນລະຫວ່າງວັນທີ 1 ຫາວັນທີ 12 ຂອງເດືອນພະຈິກ. ໃນກອງປະຊຸມພາກສຸດທ້າຍ, ໄດ້ມີການພິຈາລະນາເຖິງຄວາມສຳຄັນຂອງການເປີດເຜີຍ ຊຶ່ງໄດ້ຖືກຈັດພິມໃນເວລາຕໍ່ມາ ເປັນ* Book of Commandments *(ປຶ້ມພຣະບັນຍັດ), ແລະ ຫລັງຈາກນັ້ນ ຄຳສອນ ແລະ ພັນທະສັນຍາ ໄດ້ຖືກພິຈາລະນາ. ການເປີດເຜີຍນີ້ ໄດ້ຖືກມອບໃຫ້ຫລັງຈາກການອອກສຽງຢູ່ໃນກອງປະຊຸມໃຫຍ່ວ່າ ການເປີດເຜີຍ "ມີຄ່າຕໍ່ສາດສະໜາຈັກ ເກີນກວ່າຄວາມຮັ່ງມີໃດໆຢູ່ໃນໂລກນີ້." ປະຫວັດຂອງໂຈເຊັບ ສະມິດ ອ້າງເຖິງການເປີດເຜີຍ ວ່າເປັນ "ຮາກຖານຂອງສາດສະໜາຈັກໃນຍຸກສຸດທ້າຍນີ້, ແລະ ເປັນປະໂຫຍດຕໍ່ໂລກ, ທີ່ສະແດງໃຫ້ເຫັນວ່າ ຂໍກະແຈແຫ່ງຄວາມລຶກລັບຂອງອານາຈັກຂອງພຣະຜູ້ຊ່ວຍໃຫ້ລອດຂອງເຮົາໄດ້ຖືກຝາກຝັງໄວ້ກັບມະນຸດອີກເທື່ອໜຶ່ງ."*

*1–5, ຜູ້ພິທັກຮັກສາໄດ້ຖືກກຳນົດໃຫ້ພິມການເປີດເຜີຍ; 6–13, ຄົນທີ່ທຳງານໃນເລື່ອງທາງວິນຍານກໍເໝາະສົມກັບຄ່າຈ້າງຂອງເຂົາ; 14–18, ໄພ່ພົນຂອງພຣະເຈົ້າຄວນເທົ່າທຽມກັນໃນສິ່ງຂອງທາງໂລກ.*

1 ຈົ່ງເບິ່ງ, ແລະ ຈົ່ງເຊື່ອຟັງ, ໂອ້ ເຈົ້າຜູ້ອາໄສຂອງຊີໂອນ, ແລະ ເຈົ້າທຸກຄົນຜູ້ເປັນຂອງສາດສະໜາຈັກຂອງເຮົາຜູ້ຢູ່ຫ່າງໄກ, ແລະ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງເຮົາຈະມອບໃຫ້ແກ່ຜູ້ຮັບໃຊ້ຂອງເຮົາໂຈເຊັບ ສະມິດ, ຜູ້ລູກ, ແລະ ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ມາຕິນ ແຮຣິສ, ແລະ ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ອໍລີເວີ ຄາວເດີຣີ, ແລະ ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ຈອນ ວິດເມີ, ແລະ ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ, ແລະ ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ວິວລຽມ ດັບເບິນຢູ ແຟ້ວສ໌ ນຳອີກ, ໂດຍທາງບັນຍັດແກ່ພວກເຂົາ.

2 ເພາະເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຂົາ; ດັ່ງນັ້ນ ຈົ່ງເຊື່ອຟັງ ແລະ ຟັງ, ເພາະພຣະຜູ້ເປັນເຈົ້າໄດ້ກ່າວກັບພວກເຂົາດັ່ງນີ້—

3 ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ກຳນົດພວກເຂົາ, ແລະ ແຕ່ງຕັ້ງພວກເຂົາໃຫ້ເປັນ [a]ຜູ້ພິທັກຮັກສາການເປີດເຜີຍ ແລະ ບັນຍັດທັງຫລາຍ ຊຶ່ງເຮົາໄດ້ມອບໃຫ້ແກ່ພວກເຂົາ, ແລະ ຊຶ່ງເຮົາຈະມອບໃຫ້ແກ່ ພວກເຂົາຕໍ່ໄປໃນພາຍຂ້າງໜ້າ;

4 ແລະ ເລື່ອງລາວຂອງສິ່ງທີ່ຢູ່ໃນການພິທັກຮັກສານີ້ ເຮົາຈະຮຽກຮ້ອງຈາກພວກເຂົາໃນວັນເວລາແຫ່ງການພິພາກສາ.

5 ດັ່ງນັ້ນ, ເຮົາຈຶ່ງໄດ້ກຳນົດພວກເຂົາ, ແລະ ນີ້ຄືພາລະກິດຂອງພວກເຂົາຢູ່ໃນສາດສະໜາຈັກຂອງພຣະເຈົ້າ, ເພື່ອໃຫ້ດູແລສິ່ງເຫລົ່ານີ້ ແລະ ສິ່ງທີ່ກ່ຽວພັນກັບມັນ, ແທ້ຈິງແລ້ວ, ຜົນປະໂຫຍດຂອງມັນ.

6 ດັ່ງນັ້ນ, ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຂົາ, ວ່າພວກເຂົາຈະບໍ່ມອບສິ່ງເຫລົ່ານີ້ໃຫ້ແກ່ສາດສະໜາຈັກ, ທັງບໍ່ໃຫ້ແກ່ໂລກ;

7 ເຖິງຢ່າງໃດກໍຕາມ, ຕາບໃດທີ່ພວກ

**70** 3 *ກ* 1 ກຣທ 4:1; ຄພ 72:20.

ເຂົາໄດ້ຮັບຫລາຍກວ່າຄວາມຈຳເປັນ ແລະ
ຄວາມຕ້ອງການ, ແລ້ວຄວນມອບມັນເຂົ້າ
ກຄັງຂອງເຮົາ;
8 ແລະ ຜົນ ປະ ໂຫຍດ ຈະ ຖືກ ອຸ ທິດ
ຖວາຍແກ່ຜູ້ອາໄສຂອງຊີໂອນ, ແລະ ແກ່
ລູກຫລານຂອງພວກເຂົາ, ຕາບໃດທີ່ພວກ
ເຂົາກາຍເປັນ ກທາຍາດອີງຕາມກົດຂອງ
ອານາຈັກ.
9 ຈົ່ງເບິ່ງ, ນີ້ຄືສິ່ງທີ່ພຣະຜູ້ເປັນເຈົ້າຮຽກ
ຮ້ອງຈາກມະນຸດທຸກຄົນໃນການເປັນ ກຜູ້ພິ
ທັກຮັກສາຂອງເຂົາ, ດັ່ງທີ່ເຮົາ, ພຣະຜູ້ເປັນ
ເຈົ້າ, ໄດ້ກຳນົດ ຫລື ຈະກຳນົດຄົນໃດຄົນ
ໜຶ່ງຕໍ່ໄປໃນພາຍຂ້າງໜ້າ.
10 ແລະ ຈົ່ງເບິ່ງ, ບໍ່ມີຄົນໃດຖືກຍົກເວັ້ນ
ຈາກກົດນີ້ ຜູ້ເປັນຂອງສາດສະໜາຈັກຂອງ
ພຣະເຈົ້າທີ່ຊົງພຣະຊົນຢູ່;
11 ແທ້ຈິງແລ້ວ, ທັງບໍ່ແມ່ນອະທິການ,
ທັງບໍ່ແມ່ນ ກຕົວແທນທີ່ຮັກສາຄັງຂອງພຣະ
ຜູ້ເປັນເຈົ້າ, ທັງບໍ່ແມ່ນ ຜູ້ໄດ້ຖືກກຳນົດໃຫ້
ເປັນຜູ້ພິທັກຮັກສາເລື່ອງທາງໂລກ.
12 ຄົນ ໃດ ທີ່ ຖືກ ກຳ ນົດ ໃຫ້ປະຕິບັດ
ເລື່ອງທາງວິນຍານ, ຄົນໆນັ້ນກໍ ກເໝາະ
ສົມກັບຄ່າຈ້າງຂອງເຂົາ, ເໝືອນດັ່ງຄົນທີ່
ໄດ້ຖືກກຳນົດໃຫ້ເປັນຜູ້ພິທັກຮັກສາເພື່ອ
ປະຕິບັດເລື່ອງທາງໂລກ;
13 ແທ້ຈິງແລ້ວ, ແມ່ນແຕ່ຫລວງຫລາຍ
ກວ່ານັ້ນ, ຊຶ່ງຄວາມຫລວງຫລາຍນັ້ນຈະ
ເພີ່ມທະວີຂຶ້ນແກ່ເຂົາ ຜ່ານການສະແດງ
ໃຫ້ປະຈັກຂອງພຣະວິນຍານ.
14 ເຖິງ ຢ່າງ ໃດ ກໍ ຕາມ, ໃນ ເລື່ອງ ທາງ
ໂລກຂອງພວກເຈົ້າ, ພວກເຈົ້າຕ້ອງ ກເທົ່າ
ທຽມກັນ, ແລະ ສິ່ງນີ້ບໍ່ແມ່ນຢ່າງບໍ່ເຕັມໃຈ,
ຖ້າບໍ່ດັ່ງນັ້ນຄວາມຫລວງຫລາຍຂອງການ
ສະແດງໃຫ້ປະຈັກຂອງພຣະວິນຍານ ຈະ
ຖືກກັກໄວ້.
15 ບັດ ນີ້, ເຮົາ ຈະ ມອບ ກບັນ ຍັດ ຂໍ້ ນີ້
ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາເພື່ອເປັນຜົນປະ
ໂຫຍດແກ່ພວກເຂົາ ໃນຂະນະທີ່ພວກເຂົາ
ຍັງຢູ່, ເພື່ອການສະແດງໃຫ້ປະຈັກຂອງ
ພອນຂອງເຮົາຢູ່ເທິງຫົວຂອງພວກເຂົາ,
ແລະ ເພື່ອລາງວັນສຳລັບ ຂຄວາມພາກ
ພຽນຂອງພວກເຂົາ ແລະ ເພື່ອຄວາມປອດ
ໄພຂອງພວກເຂົາ;
16 ເພື່ອອາຫານ ແລະ ເພື່ອ ກເຄື່ອງນຸ່ງ
ຫົ່ມ; ເພື່ອມູນມໍລະດົກ; ເພື່ອບ້ານເຮືອນ
ແລະ ເພື່ອແຜ່ນດິນ, ໃນສະພາບການໃດໆ
ກໍຕາມທີ່ເຮົາ, ພຣະຜູ້ເປັນເຈົ້າ, ຈະວາງ
ພວກເຂົາໄວ້, ແລະ ບ່ອນໃດກໍຕາມທີ່ເຮົາ,
ພຣະຜູ້ເປັນເຈົ້າ, ຈະສົ່ງພວກເຂົາໄປ.
17 ເພາະພວກເຂົາໄດ້ຊື່ສັດໃນ ກຫລາຍ
ສິ່ງ, ແລະ ເຮັດໄດ້ດີຕາບໃດທີ່ພວກເຂົາບໍ່
ໄດ້ເຮັດບາບ.
18 ຈົ່ງ ເບິ່ງ, ເຮົາ, ພຣະ ຜູ້ ເປັນ ເຈົ້າ, ມີ
ກເມດຕາ ແລະ ຈະໃຫ້ພອນແກ່ພວກເຂົາ,
ແລະ ພວກເຂົາຈະເຂົ້າໄປໃນຄວາມຊື່ນ
ຊົມຂອງເລື່ອງເຫລົ່ານີ້. ແມ່ນເປັນດັ່ງນັ້ນ.
ອາແມນ.

7 *ກ* ຄພ 72:9–10.
8 *ກ* ຄພ 38:20.
9 *ກ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
11 *ກ* ຄພ 57:6.
12 *ກ* ລກ 10:7.
14 *ກ* ຄພ 49:20.
ຄມພ ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.
15 *ກ* ພບຍ 10:12–13.
*ຂ* ຄມພ ພາກພຽນ, ຄວາມພາກພຽນ.
16 *ກ* ຄພ 59:16–20.
17 *ກ* ມທ 25:21–23.
18 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.

# ພາກທີ 71

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 1 ເດືອນທັນວາ, 1831. ສາດສະດາໄດ້ສືບຕໍ່ແປພຣະຄຣິສຕະທຳຄຳພີ ໂດຍມີຊິດນີ ຣິກດອນ ເປັນຜູ້ຂຽນໃຫ້ເພິ່ນ ຈົນກວ່າໄດ້ຮັບການເປີດເຜີຍນີ້, ຊຶ່ງເວລານັ້ນໄດ້ຢຸດການທຳງານໄວ້ຊົ່ວຄາວເພື່ອວ່າພວກເພິ່ນຈະໄດ້ບັນລຸຕາມຄຳແນະນຳທີ່ມອບໃຫ້ໃນນັ້ນ. ພວກເພິ່ນຕ້ອງໄດ້ອອກໄປສັ່ງສອນ ເພື່ອບັນເທົາຄວາມຮູ້ສຶກບໍ່ດີທີ່ເກີດຂຶ້ນກັບສາດສະໜາຈັກ ອັນເປັນສາເຫດຈາກຈົດໝາຍຂອງນາຍເອຊະຣາ ບູທ໌ ຢູ່ໃນໜັງສືພິມ, ຜູ້ໄດ້ປະຖິ້ມຄວາມເຊື່ອໄປແລ້ວ.*

*1–4, ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນໄດ້ຖືກສົ່ງອອກໄປປະກາດພຣະກິດຕິຄຸນ; 5–11, ສັດຕູຂອງໄພ່ພົນຂອງພຣະເຈົ້າຈະຖືກເຮັດໃຫ້ງຶງງັນ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບເຈົ້າ ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ [ກ]ຊິດນີ ຣິກດອນ, ວ່າຕາມຄວາມຈິງແລ້ວ ເວລາໄດ້ມາເຖິງ ຊຶ່ງມັນຈຳເປັນ ແລະ ເຮົາເຫັນວ່າເໝາະສົມທີ່ພວກເຈົ້າຈະເປີດປາກຂອງພວກເຈົ້າເພື່ອ [ຂ]ປະກາດພຣະກິດຕິຄຸນຂອງເຮົາ, ເລື່ອງຂອງອານາຈັກ, ໂດຍອະທິບາຍ [ຄ]ຄວາມລຶກລັບໃນນັ້ນຈາກພຣະຄຳພີ, ຕາມສ່ວນນັ້ນຂອງພຣະວິນຍານ ແລະ ອຳນາດ ຊຶ່ງຈະຖືກມອບໃຫ້ແກ່ພວກເຈົ້າ, ແມ່ນແຕ່ເໝືອນດັ່ງທີ່ເຮົາປະສົງ.

2 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ຈົ່ງປະກາດແກ່ໂລກໃນພາກພື້ນຕ່າງໆທີ່ອ້ອມຮອບ, ແລະ ໃນສາດສະໜາຈັກນຳອີກ, ຊ່ວງໄລຍະເວລາໜຶ່ງ, ແມ່ນແຕ່ຈົນກວ່າມັນຈະຖືກເຮັດໃຫ້ເປັນທີ່ຮູ້ຈັກ ແກ່ພວກເຈົ້າ.

3 ຕາມຄວາມຈິງແລ້ວ ນີ້ຄືພາລະກິດໃນຊ່ວງໄລຍະເວລາໜຶ່ງ, ຊຶ່ງເຮົາໄດ້ມອບໃຫ້ແກ່ພວກເຈົ້າ.

4 ດັ່ງນັ້ນ, ພວກເຈົ້າຈົ່ງເຮັດວຽກງານຢູ່ໃນສວນອະງຸ່ນຂອງເຮົາ. ຈົ່ງເອີ້ນຫາຜູ້ອາໄສຂອງແຜ່ນດິນໂລກ, ແລະ ກ່າວເປັນພະຍານ, ແລະ ຕຽມວິທີທາງສຳລັບບັນຍັດ ແລະ ການເປີດເຜີຍ ຊຶ່ງຈະມາເຖິງ.

5 ບັດນີ້, ຈົ່ງເບິ່ງ ນີ້ຄືປັນຍາ; ຜູ້ໃດກໍຕາມທີ່ອ່ານ, ກໍໃຫ້ເຂົາ [ກ]ເຂົ້າໃຈ ແລະ [ຂ]ຮັບເອົານຳອີກ;

6 ເພາະ ແກ່ ຄົນ ທີ່ ຮັບ ເອົາ ມັນ ຈະ ຖືກມອບ ໃຫ້ ຢ່າງ [ກ]ຫລວງຫລາຍ, ແມ່ນແຕ່ອຳນາດ.

7 ດັ່ງນັ້ນ, ຈົ່ງເຮັດໃຫ້ສັດຕູຂອງພວກເຈົ້າ [ກ]ງຶງງັນ; ຈົ່ງເອີ້ນໃຫ້ພວກເຂົາມາ [ຂ]ພົບກັບພວກເຈົ້າທັງໃນສາທາລະນະຊົນ ແລະໃນບ່ອນທີ່ເປັນສ່ວນຕົວ; ແລະ ຕາບໃດທີ່ພວກເຈົ້າຍັງຊື່ສັດ ຄວາມອັບອາຍຂອງພວກເຂົາ ຈະຖືກສະແດງໃຫ້ປະຈັກ.

8 ດັ່ງນັ້ນ, ໃຫ້ພວກເຂົານຳຄຳໂຕ້ແຍ້ງອັນມີພະລັງຂອງພວກເຂົາມາກ່າວຕ້ານພຣະຜູ້ເປັນເຈົ້າ.

**71** 1*ກ* ຄມພ ຣິກດອນ, ຊິດນີ.
*ຂ* ຄມພ ວຽກງານເຜີຍແຜ່.
*ຄ* ຄພ 42:61, 65.
5*ກ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
*ຂ* ແອວ 12:9–11.
6*ກ* ມທ 13:12.
7*ກ* ມຊ 7:13–17.
*ຂ* ຄພ 63:37; 68:8–9.

9 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້ກັບພວກເຈົ້າ—ວ່າບໍ່ມີ [ກ]ອາ
ວຸດໃດທີ່ຖືກປະກອບຂຶ້ນເພື່ອ ຕໍ່ຕ້ານພວກ
ເຈົ້າຈະ ຈະເລີນໄດ້;
10 ແລະ ຖ້າຫາກຄົນໃດເປີດປາກຂອງ
ເຂົາກ່າວຕ້ານພວກເຈົ້າ ເຂົາຈະຖືກເຮັດ
ໃຫ້ງຶງງັນໃນເວລາອັນເໝາະສົມຂອງເຮົາ
ເອງ.
11 ດັ່ງນັ້ນ, ຈົ່ງຮັກສາບັນຍັດຂອງເຮົາ;
ມັນເປັນຄວາມຈິງ ແລະ ຊື່ສັດ. ແມ່ນເປັນ
ດັ່ງນັ້ນ. ອາແມນ.

# ພາກທີ 72

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 4 ເດືອນທັນວາ, 1831. ແອວເດີ ແລະ ສະມາຊິກຫລາຍຄົນໄດ້ມາຊຸມນຸມກັນເພື່ອຮຽນຮູ້ໜ້າທີ່ຂອງພວກເຂົາ ແລະ ເພື່ອຈະໄດ້ຮັບການເສີມສ້າງຕໍ່ໄປໃນຄຳສອນຂອງສາດສະໜາຈັກ. ພາກນີ້ເປັນການຮ່ວມການເປີດເຜີຍສາມຄັ້ງທີ່ໄດ້ຮັບໃນວັນດຽວກັນ. ຂໍ້ທີ 1 ຈົນເຖິງ 8 ບອກໃຫ້ຮູ້ເຖິງການເອີ້ນຂອງນິວເອັນ ເຄ ວິດນີ ເປັນອະທິການ. ແລ້ວລາວໄດ້ຮັບການເອີ້ນ ແລະ ໄດ້ຮັບການແຕ່ງຕັ້ງ, ຫລັງຈາກນັ້ນ ກໍໄດ້ຮັບ ຂໍ້ທີ 9 ຈົນເຖິງ 23 ຊຶ່ງໃຫ້ ຂໍ້ມູນເພີ່ມເຕີມ ກ່ຽວກັບໜ້າທີ່ຂອງອະທິການ. ຫລັງຈາກນັ້ນ, ຂໍ້ທີ 24 ຈົນເຖິງ 26 ກໍໄດ້ຖືກມອບໃຫ້, ຊຶ່ງເປັນຄຳແນະນຳກ່ຽວກັບການເຕົ້າໂຮມກັນທີ່ຊີໂອນ.*

*1–8, ແອວເດີຕ້ອງລາຍງານເລື່ອງລາວກ່ຽວກັບສິ່ງທີ່ຢູ່ໃນຄວາມພິທັກຮັກສາຂອງພວກເຂົາຕໍ່ອະທິການ; 9–15, ອະທິການເປັນຜູ້ຮັກສາຄັງ ແລະ ດູແລຄົນຍາກຈົນ ແລະ ຄົນຂັດສົນ; 16–26, ອະທິການເປັນຜູ້ຮັບຮອງການມີຄ່າຄວນຂອງແອວເດີ.*

1 ຈົ່ງເຊື່ອຟັງ, ແລະ ຟັງສຸລະສຽງຂອງ
ພຣະຜູ້ເປັນເຈົ້າ, ໂອ້ ພວກເຈົ້າຜູ້ໄດ້ມາ
ຮ່ວມຊຸມນຸມນຳກັນ, ຜູ້ເປັນ [ກ]ມະຫາປະໂລ
ຫິດແຫ່ງສາດສະໜາຈັກຂອງເຮົາ, ຜູ້ຊຶ່ງ
[ຂ]ອານາຈັກ ແລະ ອຳນາດໄດ້ຖືກມອບໃຫ້.
2 ເພາະຕາມຄວາມຈິງແລ້ວ ພຣະຜູ້ເປັນ
ເຈົ້າໄດ້ກ່າວດັ່ງນີ້, ເຮົາເຫັນສົມຄວນທີ່ຈະ
ກຳນົດ [ກ]ອະທິການ ໃຫ້ແກ່ພວກເຈົ້າ, ຫລື
ຈາກພວກເຈົ້າ, ໃຫ້ແກ່ໜ່ວຍຂອງສາດສະ
ໜາຈັກ ໃນສວນອະງຸ່ນສ່ວນນີ້ຂອງພຣະຜູ້
ເປັນເຈົ້າ.
3 ແລະ ຕາມຄວາມຈິງແລ້ວ ໃນເລື່ອງນີ້
ພວກເຈົ້າໄດ້ເຮັດໄປຢ່າງສະຫລາດ, ເພາະ
ມັນເປັນການຮຽກຮ້ອງຂອງພຣະຜູ້ເປັນ
ເຈົ້າ, ຈາກມືຂອງ [ກ]ຜູ້ພິທັກຮັກສາແຕ່ລະ
ຄົນ, ເພື່ອໃຫ້ລາຍງານ [ຂ]ເລື່ອງລາວກ່ຽວ
ກັບສິ່ງທີ່ຢູ່ໃນ [ຄ]ຄວາມພິທັກຮັກສາຂອງ
ເຂົາ, ທັງໃນການເວລາ ແລະ ໃນຊົ່ວນິລັນ
ດອນ.
4 ເພາະຄົນທີ່ຊື່ສັດ ແລະ [ກ]ສະຫລາດ
ໃນການເວລາຖືວ່າມີຄ່າຄວນທີ່ຈະໄດ້ຮັບ

9 ກ ອຊຢ 54:17.
72 1 ກ ຄພ 68:14–19.
ຂ ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
2 ກ ຄມພ ອະທິການ.
3 ກ ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
ຂ ຄພ 42:32; 104:11–13.
ຄ ລກ 19:11–27.
4 ກ ມທ 24:45–47.

[ຂ]ຜາສາດ ເປັນມູນມໍລະດົກ ຊຶ່ງພຣະບິດາ
ຂອງເຮົາໄດ້ຕຽມໄວ້ສຳລັບເຂົາ.
5 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າວ່າ, ພວກແອວເດີຂອງສາດສະໜາຈັກ
ໃນ [ກ]ສວນອະງຸ່ນສ່ວນນີ້ຂອງເຮົາ ຈະລາຍ
ງານເລື່ອງລາວກ່ຽວກັບສິ່ງທີ່ຢູ່ໃນຄວາມພິ
ທັກຮັກສາຂອງພວກເຂົາຕໍ່ອະທິການ, ຜູ້ທີ່
ເຮົາຈະກຳນົດໄວ້ຢູ່ໃນສວນອະງຸ່ນສ່ວນນີ້
ຂອງເຮົາ.
6 ສິ່ງ ເຫລົ່າ ນີ້ ຈະ ຖືກ ບັນ ທຶກ ໄວ້, ເພື່ອ
ມອບໃຫ້ແກ່ອະທິການໃນຊີໂອນ.
7 ແລະ ໜ້າ ທີ່ຂອງ [ກ]ອະ ທິ ການ ຈະ ຖືກ
ເຮັດໃຫ້ເປັນທີ່ຮູ້ຈັກໂດຍບັນຍັດ ຊຶ່ງໄດ້ຖືກ
ມອບໃຫ້, ແລະ ໂດຍສຽງຂອງກອງປະຊຸມ
ໃຫຍ່.
8 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວ ກັບພວກເຈົ້າວ່າ ຜູ້ຮັບ ໃຊ້ຂອງເຮົາ
[ກ]ນິວເອັນ ເຄ ວິດນີ ຄືຜູ້ທີ່ຈະໄດ້ຮັບການ
ກຳນົດ ແລະ ແຕ່ງຕັ້ງສູ່ອຳນາດນີ້. ນີ້ຄືພຣະ
ປະສົງຂອງພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າ, ພຣະຜູ້ໄຖ່ຂອງພວກ
ເຈົ້າ. ແມ່ນເປັນດັ່ງນັ້ນ. ອາແມນ.
9 ພຣະຄຳຂອງພຣະຜູ້ເປັນເຈົ້າ, ນອກ
ຈາກກົດທີ່ໄດ້ມອບໃຫ້ແລ້ວ, ຊຶ່ງເຮັດໃຫ້ຮູ້
ໜ້າທີ່ຂອງອະທິການຜູ້ໄດ້ຮັບການແຕ່ງຕັ້ງ
ສຳລັບໜ່ວຍຂອງສາດສະໜາຈັກໃນສວນ
ອະງຸ່ນສ່ວນນີ້, ຊຶ່ງຕາມຄວາມຈິງແລ້ວຄື—
10 ເພື່ອຮັກສາ [ກ]ຄັງຂອງພຣະຜູ້ເປັນ
ເຈົ້າ; ເພື່ອຮັບເອົາເງິນທຶນຈາກໜ່ວຍຂອງ
ສາດສະໜາຈັກຂອງສວນອະງຸ່ນສ່ວນນີ້;
11 ເພື່ອຮັບເອົາເລື່ອງລາວຂອງແອວເດີ
ດັ່ງທີ່ໄດ້ບັນຊາໄວ້ກ່ອນນັ້ນ; ແລະ ເພື່ອ
[ກ]ປະຕິບັດສາດສະໜາກິດຕໍ່ຄວາມຕ້ອງ
ການຂອງພວກເຂົາ, ຜູ້ຈະຈ່າຍສຳລັບສິ່ງ
ທີ່ພວກເຂົາໄດ້ຮັບ, ຕາບໃດທີ່ພວກເຂົາມີ
ທີ່ຈະຈ່າຍ;
12 ເພື່ອ ສິ່ງ ນີ້ ຈະ ຖືກ ອຸ ທິດ ຖວາຍ ເພື່ອ
ຄວາມ ດີ ຂອງ ສາດສະໜາ ຈັກ, ເພື່ອຄົນ
ຍາກຈົນ ແລະ ຄົນຂັດສົນນຳອີກ.
13 ແລະ ຄົນທີ່ ບໍ່ [ກ]ມີທີ່ຈະ ຈ່າຍ, ເລື່ອງ
ລາວຈະຖືກບັນທຶກໄວ້ ແລະ ສົ່ງໄປໃຫ້ອະ
ທິການຂອງຊີໂອນ, ຜູ້ຈະຈ່າຍຄ່າໜີ້ສິນນັ້ນ
ຈາກສິ່ງທີ່ພຣະຜູ້ເປັນເຈົ້າຈະໃສ່ໄວ້ໃນມື
ຂອງເຂົາ.
14 ແລະ ວຽກງານຂອງຄົນຊື່ສັດ ຜູ້ທຳ
ງານໃນເລື່ອງທາງວິນຍານ, ໃນການປະຕິ
ບັດພຣະກິດຕິຄຸນ ແລະ ເລື່ອງຂອງອານາ
ຈັກແກ່ສາດສະໜາຈັກ, ແລະ ແກ່ໂລກ, ຈະ
ຊຳລະໜີ້ສິນໃຫ້ອະທິການໃນຊີໂອນ;
15 ດັ່ງນັ້ນມັນຈຶ່ງອອກມາຈາກສາດສະ
ໜາຈັກ, ເພາະຕາມ [ກ]ກົດແລ້ວ ທຸກຄົນທີ່
ຂຶ້ນມາຍັງຊີໂອນຕ້ອງວາງທຸກສິ່ງໄວ້ຕໍ່ໜ້າ
ອະທິການໃນຊີໂອນ.
16 ແ ລ ະ ບັດນີ້, ຕາມ ຄວາມ ຈິງ ແລ້ວ
ເຮົາກ່າວກັບພວກເຈົ້າວ່າ ແອວເດີທຸກຄົນ
ໃນສວນອະງຸ່ນສ່ວນນີ້ ຈະຕ້ອງລາຍງານ
ເລື່ອງ ລາວ ກ່ຽວ ກັບ ສິ່ງທີ່ຢູ່ໃນ ຄວາມພິ
ທັກຮັກສາຂອງເຂົາຕໍ່ອະທິການ ໃນສວນ
ອະງຸ່ນສ່ວນນີ້ຂອງເຮົາ—
17 [ກ]ໃບຮັບຮອງຈາກຜູ້ພິພາກສາ ຫລື
ອະທິການໃນສວນອະງຸ່ນສ່ວນນີ້, ເຖິງອະ
ທິການໃນຊີໂອນ, ຈະເຮັດໃຫ້ທຸກຄົນເປັນ
ທີ່ຍອມຮັບ, ແລະ ຜ່ານຂໍ້ກຳນົດທຸກຂໍ້, ເພື່ອ
ເປັນມູນມໍລະດົກ, ແລະ ເພື່ອຈະໄດ້ຖືກຮັບ

4 *ຂ* ຄພ 59:2.
5 *ກ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
7 *ກ* ຄພ 42:31; 46:27; 58:17–18; 107:87–88.
8 *ກ* ຄມພ ວິດນີ, ນິວເອັນ ເຄ.
10 *ກ* ຄພ 70:7–11; 78:3. ຄມພ ຄັງ.
11 *ກ* ຄພ 75:24.
13 *ກ* ຄມພ ຍາກຈົນ.
15 *ກ* ຄພ 42:30–31. ຄມພ ອຸທິດຖວາຍ, ກົດ ແຫ່ງການອຸທິດຖວາຍ.
17 *ກ* ຄພ 20:64, 84.

ໄວ້ເປັນ [ຂ]ຜູ້ພິທັກຮັກສາທີ່ສະຫລາດ ແລະ
ເປັນຄົນງານທີ່ຊື່ສັດ;
18 ຖ້າ ບໍ່ ດັ່ງນັ້ນ ອະທິການຂອງຊີໂອນ
ຈະບໍ່ຍອມຮັບເຂົາ.
19 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ໃຫ້ແອວເດີທຸກຄົນ
ຜູ້ຈະລາຍງານເລື່ອງລາວແກ່ອະທິການ
ຂອງສາດສະໜາຈັກໃນສວນອະງຸ່ນສ່ວນນີ້
ໄດ້ຮັບການຮັບຮອງໂດຍສາດສະໜາຈັກ
ຫລື ໜ່ວຍຕ່າງໆຂອງສາດສະໜາຈັກ, ໃນ
ບ່ອນທີ່ເຂົາທຳງານ, ເພື່ອວ່າເຂົາຈະເຮັດ
ໃຫ້ຕົນເອງ ແລະ ການລາຍງານຂອງເຂົາ
ເປັນທີ່ຍອມຮັບໃນທຸກສິ່ງ.
20 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງ
ເຮົາ ຜູ້ໄດ້ຖືກກຳນົດໃຫ້ເປັນຜູ້ພິທັກຮັກສາ
[ກ]ເອກະສານຂອງສາດສະໜາຈັກຂອງເຮົາ
ມີສິດໄດ້ຮັບຄວາມຊ່ວຍເຫລືອຈາກອະທິ
ການ ຫລື ອະທິການທັງຫລາຍໃນທຸກສິ່ງ
ທັງປວງ—
21 ເພື່ອວ່າ [ກ]ການເປີດເຜີຍຈະໄດ້ຖືກ
ພິມ, ແລະ ອອກໄປຈົນເຖິງທີ່ສຸດຂອງແຜ່ນ
ດິນໂລກ; ເພື່ອວ່າພວກເຂົາຈະໄດ້ຮັບເງິນ
ທຶນ ຊຶ່ງຈະເປັນປະໂຫຍດໃຫ້ແກ່ສາດສະ
ໜາຈັກໃນທຸກສິ່ງທັງປວງ;
22 ເພື່ອວ່າພວກເຂົາຈະໄດ້ເຮັດໃຫ້ຕົນ
ເອງເປັນທີ່ຍອມຮັບໃນທຸກສິ່ງທັງປວງນຳ
ອີກ, ແລະ ຖືກຮັບຮູ້ວ່າເປັນຜູ້ພິທັກຮັກສາ
ທີ່ສະຫລາດ.
23 ແລະ ບັດນີ້, ຈົ່ງເບິ່ງ, ສິ່ງນີ້ຈະເປັນ
ແບບຢ່າງໃຫ້ແກ່ສາຂາຕ່າງໆທີ່ແຜ່ລາມ
ອອກໄປຂອງສາດສະໜາຈັກຂອງເຮົາ,
ໃນແຜ່ນດິນໃດກໍຕາມທີ່ມັນຖືກຈັດຕັ້ງຂຶ້ນ.
ແລະ ບັດນີ້ ເຮົາຢຸດຕິການກ່າວຂອງເຮົາ.
ອາແມນ.
24 ສອງສາມຄຳຕື່ມອີກທີ່ນອກເໜືອໄປ
ຈາກກົດຂອງອານາຈັກ, ກ່ຽວກັບສະມາຊິກ
ຂອງສາດສະໜາຈັກ—ຄົນທີ່ໄດ້ຖືກ [ກ]ກຳ
ນົດໂດຍພຣະວິນຍານສັກສິດໃຫ້ຂຶ້ນໄປຍັງ
ຊີໂອນ, ແລະ ຄົນທີ່ໄດ້ຮັບສິດທິພິເສດໃຫ້
ຂຶ້ນໄປຍັງຊີໂອນ—
25 ໃຫ້ພວກເຂົາເອົາໃບຮັບຮອງຈາກ
ແອວເດີສາມຄົນຂອງສາດສະໜາຈັກ ຫລື
ໃບຮັບຮອງຈາກອະທິການຂຶ້ນໄປໃຫ້ອະທິ
ການ;
26 ຖ້າບໍ່ດັ່ງນັ້ນ ຄົນທີ່ຈະຂຶ້ນໄປຍັງແຜ່ນ
ດິນຂອງຊີໂອນ ຈະບໍ່ຖືກຮັບຮູ້ວ່າເປັນຜູ້ພິ
ທັກຮັກສາທີ່ສະຫລາດ. ສິ່ງນີ້ກໍເປັນແບບ
ຢ່າງຄືກັນ. ອາແມນ.

## ພາກທີ 73

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 10 ເດືອນມັງກອນ, 1832. ຕັ້ງແຕ່ຕົ້ນເດືອນທັນວາທີ່ຜ່ານມາ, ສາດສະດາ ແລະ ຊິດນີ ໄດ້ໃຊ້ເວລາກັບການສັ່ງສອນ, ແລະ ໂດຍວິທີນີ້ ພວກເພິ່ນໄດ້ບັນລຸຄວາມສຳເລັດຫລາຍໃນການເຮັດໃຫ້ຄວາມຮູ້ສຶກທີ່ບໍ່ ພໍໃຈຕໍ່ສາດສະໜາຈັກລົດນ້ອຍຖອຍລົງ (ເບິ່ງ ຫົວຂໍ້ຂອງ ພາກທີ 71).*

17 *ຂ* ຄພ 42:32.
20 *ກ* ຄພ 70:3–5.
21 *ກ* ຄມພ ຄຳສອນ ແລະ ພັນທະສັນຍາ.
24 *ກ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.

*1–2, ແອວເດີຕ້ອງສັ່ງສອນຕໍ່ໄປ; 3–6, ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນ ຕ້ອງແປພຣະຄຣິສຕະທຳຄຳພີຕໍ່ໄປຈົນກວ່າມັນຈະສຳເລັດ.*

1 ເພາະ ຕາມ ຄວາມ ຈິງ ແລ້ວ, ພຣະ ຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຮົາເຫັນສົມຄວນທີ່ [ກ]ພວກເຂົາຄວນສັ່ງສອນພຣະກິດຕິຄຸນຕໍ່ໄປ, ແລະ ໃນການແນະນຳຕໍ່ໜ່ວຍຂອງສາດສະໜາຈັກໃນພາກພື້ນຕ່າງໆທີ່ອ້ອມຮອບ, ຈົນກວ່າຈະເຖິງກອງປະຊຸມໃຫຍ່;

2 ແລະ ຈາກນັ້ນ, ຈົ່ງເບິ່ງ, ມັນຈະຖືກເຮັດໃຫ້ເປັນທີ່ຮູ້ຈັກໃຫ້ແກ່ພວກເຂົາ, ໂດຍ [ກ]ສຽງຂອງກອງປະຊຸມໃຫຍ່, ກ່ຽວກັບພາລະກິດຫລາຍຢ່າງຂອງພວກເຂົາ.

3 ບັດນີ້, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າ ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ແລະ ຊິດນີ ຣິກດອນ, ພຣະຜູ້ເປັນເຈົ້າໄດ້ກ່າວວ່າ [ກ]ສົມຄວນຕ້ອງໄດ້ [ຂ]ແປອີກ;

4 ແລະ, ຕາບໃດທີ່ຍັງເຮັດໄດ້, ໃຫ້ສັ່ງສອນໃນພາກພື້ນຕ່າງໆທີ່ອ້ອມຮອບ ຈົນກວ່າຈະເຖິງກອງປະຊຸມໃຫຍ່; ແລະ ຫລັງຈາກນັ້ນ ສົມຄວນຕ້ອງເຮັດວຽກງານຂອງການແປຕໍ່ໄປຈົນກວ່າມັນສຳເລັດ.

5 ແລະ ໃຫ້ສິ່ງນີ້ເປັນແບບແຜນແກ່ແອວເດີ ຈົນກວ່າຈະໄດ້ຮັບຄວາມຮູ້ເພີ່ມເຕີມ, ແມ່ນແຕ່ດັ່ງທີ່ມັນຖືກຂຽນໄວ້.

6 ບັດນີ້ ເຮົາຈະບໍ່ມອບເລື່ອງອື່ນອີກໃຫ້ແກ່ພວກເຈົ້າໃນເວລານີ້. ຈົ່ງ [ກ]ຄາດແອວພວກເຈົ້າ ແລະ ຈົ່ງມີສະຕິ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 74

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເຂດເວນ, ລັດນິວຢອກ, ໃນປີ 1830. ເຖິງແມ່ນກ່ອນການຈັດຕັ້ງສາດສະໜາຈັກ, ກໍມີຄຳຖາມເກີດຂຶ້ນ ກ່ຽວກັບວິທີການທີ່ຖືກຕ້ອງເລື່ອງການບັບຕິສະມາ, ຈຶ່ງໄດ້ເຮັດໃຫ້ສາດສະດາສະແຫວງຫາຄຳຕອບໃນເລື່ອງນີ້. ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ ການເປີດເຜີຍນີ້ ເປັນການຂະຫຍາຍຂໍ້ຄວາມຂອງ 1 ໂກຣິນໂທ 7:14, ເປັນຂໍ້ພຣະຄຳພີ ທີ່ມັກຖືກໃຊ້ເລື້ອຍໆ ເພື່ອໃຫ້ເຫດຜົນເລື່ອງການບັບຕິສະມາໃຫ້ເດັກແດງທາລົກ.*

*1–5, ໂປໂລແນະນຳສາດສະໜາຈັກໃນວັນເວລາຂອງເພິ່ນວ່າບໍ່ໃຫ້ຮັກສາກົດຂອງໂມເຊ; 6–7, ເດັກນ້ອຍໆບໍລິສຸດ ແລະ ໄດ້ຮັບການຊຳລະໃຫ້ບໍລິສຸດໂດຍຜ່ານການຊົດໃຊ້.*

1 ເພາະ ສາມີ [ກ]ທີ່ບໍ່ເຊື່ອໄດ້ຮັບການຊຳລະໃຫ້ບໍລິສຸດໂດຍພັນລະຍາ, ແລະ ພັນລະຍາທີ່ບໍ່ເຊື່ອໄດ້ຮັບການຊຳລະໃຫ້ບໍລິສຸດໂດຍສາມີ; ຖ້າບໍ່ດັ່ງນັ້ນລູກໆຂອງເຈົ້າຈະບໍ່ສະອາດ, ແຕ່ບັດນີ້ພວກເຂົາບໍລິສຸດ.

---

**73** 1*ກ* ອສ ຄົນອື່ນໆຜູ້ໄດ້ໄປສອນສາດສະໜາ; ເບິ່ງ ຄພ 57–68.
2*ກ* ຄພ 20:63.
3*ກ* ອສ ກ່ອນໜ້ານັ້ນ ໂຈເຊັບ ແລະ ຊິດນີ ໄດ້ຖືກບັນຊາໃຫ້ຢຸດແປພຣະຄຣິສຕະທຳຄຳພີ ແລະ ໃຫ້ສັ່ງສອນພຣະກິດຕິຄຸນ. ຄພ 71:2.
*ຂ* ຄພ 45:60–61; 76:15. ຄມພ ການແປຂອງໂຈເຊັບ ສະມິດ (ປຈສ).
6*ກ* 1 ປຕ 1:13.
**74** 1*ກ* 1 ກຣທ 7:14–19.

2 ບັດນີ້, ໃນວັນເວລາຂອງອັກຄະສາວົກ ມີກົດຂອງພິທີຕັດໃນບັນດາຊາວຢິວທັງປວງຜູ້ບໍ່ໄດ້ເຊື່ອໃນພຣະກິດຕິຄຸນຂອງພຣະເຢຊູຄຣິດ.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ເກີດ [ກ]ການຂັດແຍ້ງອັນຍິ່ງໃຫຍ່ໃນບັນດາຜູ້ຄົນກ່ຽວກັບກົດຂອງ [ຂ]ພິທີຕັດ, ເພາະສາມີຜູ້ທີ່ບໍ່ເຊື່ອຢາກໃຫ້ລູກໆຂອງຕົນໄດ້ຮັບພິທີຕັດ ແລະ ມາຢູ່ພາຍໃຕ້ [ຄ]ກົດຂອງໂມເຊ, ຊຶ່ງກົດນັ້ນ ໄດ້ສິ້ນບູນແລ້ວ.

4 ແລະ ເຫດການໄດ້ບັງເກີດຂຶ້ນຄື ລູກໆ, ໂດຍທີ່ໄດ້ຮັບການລ້ຽງດູໃຫ້ຢູ່ພາຍໃຕ້ກົດຂອງໂມເຊ, ຈຶ່ງເອົາໃຈໃສ່ກັບ [ກ]ຮີດຄອງປະເພນີຂອງບັນພະບຸລຸດຂອງພວກເຂົາ ແລະ ບໍ່ເຊື່ອໃນພຣະກິດຕິຄຸນຂອງພຣະຄຣິດ, ຊຶ່ງໃນການນີ້ພວກເຂົາຈຶ່ງກາຍເປັນຄົນທີ່ບໍ່ບໍລິສຸດ.

5 ດັ່ງນັ້ນ, ເພາະເຫດນີ້ອັກຄະສາວົກຈຶ່ງໄດ້ຂຽນເຖິງສາດສະໜາຈັກ, ໂດຍມອບບັນຍັດໃຫ້ແກ່ພວກເຂົາ, ບໍ່ແມ່ນຈາກພຣະຜູ້ເປັນເຈົ້າ, ແຕ່ຈາກເພິ່ນເອງ, ວ່າຄົນທີ່ເຊື່ອບໍ່ຄວນ [ກ]ແຕ່ງງານກັບຄົນທີ່ບໍ່ເຊື່ອ; ຍົກເວັ້ນແຕ່ [ຂ]ກົດຂອງໂມເຊຈະຖືກຍົກເລີກໃນບັນດາພວກເຂົາ,

6 ເພື່ອລູກໆຂອງພວກເຂົາຈະຍັງຢູ່ໂດຍປາດສະຈາກພິທີຕັດ; ແລະວ່າຮີດຄອງປະເພນີນັ້ນຈະຖືກຍົກເລີກໄປ, ຊຶ່ງກ່າວວ່າເດັກນ້ອຍໆບໍ່ບໍລິສຸດ; ເພາະເລື່ອງນີ້ມີຢູ່ໃນບັນດາຊາວຢິວ;

7 ແຕ່ [ກ]ເດັກນ້ອຍໆ [ຂ]ບໍລິສຸດ, ໂດຍໄດ້ຮັບ [ຄ]ການຊຳລະໃຫ້ບໍລິສຸດຜ່ານ [ງ]ການຊົດໃຊ້ຂອງພຣະເຢຊູຄຣິດ; ແລະ ນີ້ຄືສິ່ງທີ່ພຣະຄຳພີໝາຍເຖິງ.

# ພາກທີ 75

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງອາມເຮີດ, ລັດໂອໄຮໂອ, ວັນທີ 25 ເດືອນມັງກອນ, 1832. ພາກນີ້ປະກອບດ້ວຍການເປີດເຜີຍຢູ່ສອງຢ່າງທີ່ແຕກຕ່າງກັນ (ຢ່າງທຳອິດ ໃນ ຂໍ້ທີ 1 ຈົນເຖິງ 22 ແລະ ຢ່າງທີສອງ ໃນ ຂໍ້ທີ 23 ຈົນເຖິງ 36) ໄດ້ຖືກມອບໃຫ້ ໃນວັນດຽວກັນ. ເຫດການດັ່ງກ່າວ ໄດ້ເກີດຂຶ້ນຢູ່ກອງປະຊຸມໃຫຍ່ຊຶ່ງໂຈເຊັບ ສະມິດ ໄດ້ຮັບການສະໜັບສະໜູນ ແລະ ໄດ້ຮັບການແຕ່ງຕັ້ງໃຫ້ເປັນປະທານຂອງຖານະປະໂລຫິດສູງ. ແອວເດີບາງຄົນ ໄດ້ປາດຖະໜາຢາກຮູ້ເພີ່ມເຕີມກ່ຽວກັບໜ້າທີ່ສະເພາະຂອງຕົນ. ການເປີດເຜີຍເຫລົ່ານີ້ຈຶ່ງຕິດຕາມມາ.*

*1–5, ແອວເດີທີ່ຊື່ສັດຜູ້ສັ່ງສອນພຣະກິດຕິຄຸນຈະໄດ້ຮັບຊີວິດນິລັນດອນ; 6–12, ຈົ່ງອະທິຖານເພື່ອຈະໄດ້ຮັບພຣະຜູ້ປອບໂຍນ, ຜູ້ສອນທຸກສິ່ງທັງປວງ; 13–22, ແອວເດີຈະນັ່ງຢູ່ໃນການພິພາກສາຜູ້ທີ່ປະຕິເສດຂ່າວສານຂອງພວກເຂົາ; 23–36,*

3 *ກ* ກຈກ 15:1–35; ຄລຕ 2:1–5.
*ຂ* ຄມພ ພິທີຕັດ.
*ຄ* ຄມພ ກົດຂອງໂມເຊ.
4 *ກ* ຄມພ ປະເພນີ.
5 *ກ* ຄມພ ແຕ່ງງານ, ການແຕ່ງງານ—ການແຕ່ງງານກັບຄົນຕ່າງສາດສະໜາ.
*ຂ* 2 ນຟ 25:24–27.
7 *ກ* ມຣນ 8:8–15; ຄພ 29:46–47; 137:10.
*ຂ* ຄມພ ສັກສິດ, ຄວາມສັກສິດ.
*ຄ* ຄມພ ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ.
*ງ* ຄມພ ຊົດໃຊ້, ການຊົດໃຊ້.

*ຄອບຄົວຂອງຜູ້ສອນສາດສະໜາຕ້ອງໄດ້
ຮັບຄວາມ ຊ່ວຍເຫລືອຈາກສາດ ສະ ໜາ
ຈັກ.*

1 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ເຮົາຜູ້ກ່າວແມ່ນແຕ່ໂດຍ [ກ]ສຽງ
ຂອງພຣະວິນຍານ ຂອງ ເຮົາ, ແມ່ນ ແຕ່
[ຂ]ອາລະຟາ ແລະ ໂອເມຄາ, ພຣະຜູ້ເປັນ
ເຈົ້າຂອງພວກເຈົ້າ ແລະ ພຣະເຈົ້າຂອງ
ພວກເຈົ້າ—
2 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າຜູ້ທີ່ໄດ້ມອບ
ຊື່ຂອງພວກເຈົ້າໄວ້ ເພື່ອອອກໄປປະກາດ
ພຣະກິດຕິຄຸນຂອງເຮົາ, ແລະ ເພື່ອ [ກ]ລິ່ງ່າ
ໃນ [ຂ]ສວນອະງຸ່ນຂອງເຮົາ.
3 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ ມັນ
ເປັນ ຄວາມປະສົງ ຂອງ ເຮົາທີ່ພວກເຈົ້າ
ຄວນອອກໄປ ແລະ ບໍ່ຢູ່ນີ້, ທັງບໍ່ໃຫ້ [ກ]ກຽດ
ຄ້ານ ແຕ່ໃຫ້ທຳງານດ້ວຍກຳລັງຂອງພວກ
ເຈົ້າ—
4 ຈົ່ງເປັ່ງສຽງຂອງພວກເຈົ້າດັ່ງດ້ວຍສຽງ
ແກ, [ກ]ປະກາດ [ຂ]ຄວາມຈິງຕາມການເປີດ
ເຜີຍ ແລະ ບັນ ຍັດ ຊຶ່ງເຮົາໄດ້ມອບໃຫ້
ພວກເຈົ້າ.
5 ແລະ ດັ່ງ ນັ້ນ, ຖ້າ ຫາກ ພວກ ເຈົ້າ ຊື່
ສັດ ພວກເຈົ້າຈະໜັກດ້ວຍ [ກ]ມັດເຂົ້າຢ່າງ
ຫລວງຫລາຍ, ແລະ ຈະໄດ້ [ຂ]ສວມມົງກຸດ
ດ້ວຍ [ຄ]ກຽດຕິຍົດ, ແລະ [ງ]ລັດສະໝີພາບ,
ແລະ [ຈ]ຄວາມເປັນອະມະຕະ, ແລະ [ສ]ຊີວິດ
ນິລັນດອນ.
6 ສະນັ້ນ, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບຜູ້ຮັບໃຊ້ຂອງເຮົາ ວິວລຽມ ອີ ມິກລີລິນ
ວ່າ ເຮົາ [ກ]ຍົກເລີກວຽກງານມອບໝາຍທີ່
ເຮົາໄດ້ໃຫ້ລາວ ໄປຫາດິນ ແດນພາກຕາ
ເວັນອອກ;
7 ແລະ ເຮົາຈະມອບວຽກງານມອບໝາຍ
ໃໝ່ ແລະ ບັນຍັດຂໍ້ໃໝ່ໃຫ້ລາວ, ຊຶ່ງໃນນັ້ນ
ເຮົາ, ພຣະຜູ້ເປັນເຈົ້າ, ຈະ [ກ]ຕິສອນລາວສຳ
ລັບ [ຂ]ການເວົ້າຈົ່ມຢູ່ໃນໃຈຂອງລາວ;
8 ແລະ ລາວໄດ້ເຮັດບາບ; ເຖິງຢ່າງໃດ
ກໍຕາມ, ເຮົາອະໄພໃຫ້ລາວ ແລະ ກ່າວກັບ
ລາວອີກວ່າ, ເຈົ້າຈົ່ງໄປຫາດິນແດນພາກ
ໃຕ້.
9 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ລູກ ຈອນ
ສັນ ໄປກັບລາວ, ແລະ ປະກາດສິ່ງທີ່ເຮົາ
ໄດ້ບັນຊາພວກເຂົາ—
10 ໂດຍເອີ້ນຫາພຣະນາມຂອງພຣະຜູ້
ເປັນເຈົ້າສຳລັບ [ກ]ພຣະຜູ້ປອບໂຍນ, ຊຶ່ງຈະ
ສິດສອນພວກເຂົາທຸກສິ່ງທີ່ເໝາະສົມສຳ
ລັບພວກເຂົາ—
11 ຈົ່ງ [ກ]ອະທິຖານສະເໝີເພື່ອວ່າພວກ
ເຂົາຈະບໍ່ເປັນລົມ; ແລະ ຕາບໃດທີ່ພວກ
ເຂົາເຮັດສິ່ງນີ້, ເຮົາຈະຢູ່ກັບພວກເຂົາຈົນ
ເຖິງທີ່ສຸດ.
12 ຈົ່ງເບິ່ງ, ນີ້ຄືພຣະປະສົງຂອງພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກ
ເຈົ້າກ່ຽວກັບພວກເຈົ້າ. ແມ່ນເປັນດັ່ງນັ້ນ.
ອາແມນ.
13 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ

**75** 1*ກ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ພນມ 1:8. ຄມພ ອາລະຟາ ແລະ ໂອເມຄາ.
2*ກ* ຢຄ 5:62.
*ຂ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
3*ກ* ຄມພ ກຽດຄ້ານ, ຄວາມກຽດຄ້ານ.
4*ກ* ຄມພ ວຽກງານເຜີຍແຜ່.
*ຂ* ຄພ 19:37.
5*ກ* ພສສ 126:6; ແອວ 26:5.
*ຂ* ຄມພ ມົງກຸດ, ສວມມົງກຸດ.
*ຄ* ຄມພ ໃຫ້ກຽດ.
*ງ* ຄມພ ລັດສະໝີພາບ.
*ຈ* ຄມພ ອະມະຕະ, ຄວາມ ເປັນອະມະຕະ.
*ສ* ຄມພ ຊີວິດນິລັນດອນ.
6*ກ* ຄພ 66.
7*ກ* ຄມພ ຕິສອນ, ການຕິສອນ.
*ຂ* ຄມພ ຄວາມຄິດ; ຈົ່ມ.
10*ກ* ຢຮ 14:26. ຄມພ ພຣະຜູ້ປອບໂຍນ.
11*ກ* 2 ນຟ 32:9.

ແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ໃຫ້ຜູ້ຮັບໃຊ້ຂອງເຮົາ [ກ]ອໍສັນ ຮາຍດ໌ ແລະ ຜູ້ຮັບໃຊ້ຂອງເຮົາ [ຂ]ແຊມໂຍ ເອັຈ ສະມິດ ອອກເດີນທາງໄປຫາດິນແດນພາກຕາເວັນອອກ, ແລະ ປະກາດສິ່ງທີ່ເຮົາໄດ້ບັນຊາພວກເຂົາ; ແລະ ຕາບໃດທີ່ພວກເຂົາຍັງຊື່ສັດ, ເບິ່ງແມ, ເຮົາຈະຢູ່ [ຄ]ກັບພວກເຂົາແມ່ນແຕ່ຈົນເຖິງທີ່ສຸດ.

14 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບຜູ້ຮັບໃຊ້ຂອງເຮົາ ໄລມັນ ຈອນສັນ, ແລະ ກັບຜູ້ຮັບໃຊ້ຂອງເຮົາ [ກ]ອໍສັນ ພະແຣັດ ວ່າໃຫ້ພວກເຂົາອອກເດີນທາງໄປຫາດິນແດນພາກຕາເວັນອອກ; ແລະ ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາຈະຢູ່ນຳພວກເຂົາຄືກັນ, ແມ່ນແຕ່ຈົນເຖິງທີ່ສຸດ.

15 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບຜູ້ຮັບໃຊ້ຂອງເຮົາ ອາຊາ ດອສ໌, ແລະ ກັບຜູ້ຮັບໃຊ້ຂອງເຮົາ ຄາບສ໌ ວິວສັນ, ວ່າໃຫ້ພວກເຂົາອອກເດີນທາງຄືກັນໄປຫາດິນແດນພາກຕາເວັນຕົກ, ແລະ ປະກາດພຣະກິດຕິຄຸນຂອງເຮົາ, ແມ່ນແຕ່ດັ່ງທີ່ເຮົາໄດ້ບັນຊາພວກເຂົາ.

16 ແລະ ຄົນທີ່ຊື່ສັດຈະເອົາຊະນະທຸກສິ່ງທັງປວງ, ແລະ ຈະຖືກ [ກ]ຍົກຂຶ້ນໃນວັນສຸດທ້າຍ.

17 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບຜູ້ຮັບໃຊ້ຂອງເຮົາ ເມເຈີ ເອັນ ອາສະລີ, ແລະ ຜູ້ຮັບໃຊ້ຂອງເຮົາ ເບີ ຣີກສ໌, ວ່າໃຫ້ພວກເຂົາອອກເດີນທາງຄືກັນໄປຫາດິນແດນພາກໃຕ້.

18 ແທ້ຈິງແລ້ວ, ໃຫ້ ທຸກຄົນເຫລົ່ານັ້ນທັງໝົດອອກເດີນທາງ, ດັ່ງທີ່ເຮົາໄດ້ບັນຊາພວກເຂົາ, ໄປຈາກເຮືອນຫລັງໜຶ່ງຫາເຮືອນອີກຫລັງໜຶ່ງ, ແລະ ຈາກໝູ່ບ້ານໜຶ່ງໄປຫາອີກໝູ່ບ້ານໜຶ່ງ, ແລະ ຈາກເມືອງໜຶ່ງໄປຫາອີກເມືອງໜຶ່ງ.

19 ແລະ ໃນ ເຮືອນຫລັງໃດກໍຕາມທີ່ພວກເຈົ້າເຂົ້າໄປ, ແລະ ເຂົາໄດ້ຕ້ອນຮັບພວກເຈົ້າ, ຈົ່ງປະພອນຂອງພວກເຈົ້າໄວ້ກັບເຮືອນຫລັງນັ້ນ.

20 ແລະ ໃນເຮືອນຫລັງໃດກໍຕາມທີ່ພວກເຈົ້າເຂົ້າໄປ, ແລະ ເຂົາບໍ່ຕ້ອນຮັບພວກເຈົ້າ, ໃຫ້ພວກເຈົ້າອອກໄປຈາກເຮືອນຫລັງນັ້ນຢ່າງໄວ, ແລະ [ກ]ສັ່ນຝຸ່ນອອກຈາກຕີນຂອງພວກເຈົ້າໄວ້ເປັນປະຈັກພະຍານຕໍ່ຕ້ານເຂົາ.

21 ແລະ ພວກເຈົ້າຈະເຕັມໄປດ້ວຍ [ກ]ຄວາມສຸກ ແລະ ຄວາມຊື່ນຊົມຍິນດີ; ແລະ ຈົ່ງຮູ້ເລື່ອງນີ້, ວ່າໃນວັນແຫ່ງການພິພາກສາ ພວກເຈົ້າຈະເປັນ [ຂ]ຜູ້ຕັດສິນເຮືອນຫລັງນັ້ນ, ແລະ ກ່າວໂທດເຂົາ;

22 ແລະ ຄົນນອກສາດສະໜາຈະສາມາດທົນໃນວັນແຫ່ງການພິພາກສາຫລາຍກວ່າເຮືອນຫລັງນັ້ນ; ສະນັ້ນ, ຈົ່ງ [ກ]ຄາດແອວພວກເຈົ້າ ແລະ ຊື່ສັດ, ແລະ ພວກເຈົ້າຈະເອົາຊະນະທຸກສິ່ງ, ແລະ ຈະຖືກຍົກຂຶ້ນໃນວັນສຸດທ້າຍ. ແມ່ນເປັນດັ່ງນັ້ນ. ອາແມນ.

23 ແລະ ອີກເທື່ອໜຶ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບພວກເຈົ້າ, ໂອ້ ພວກເຈົ້າແອວເດີຂອງສາດສະໜາຈັກຂອງເຮົາ, ຜູ້ທີ່ໄດ້ມອບຊື່ຂອງພວກເຈົ້າໄວ້ ເພື່ອວ່າພວກ

13 ກ ຄມພ ຮາຍດ໌, ອໍສັນ.
ຂ ຄມພ ສະມິດ, ຊາມູເອນ ເອັຈ.
ຄ ມທ 28:19–20.
14 ກ ຄມພ ພະແຣັດ, ອໍສັນ.
16 ກ ຄພ 5:35.
20 ກ ມທ 10:14; ລກ 10:11–12; ຄພ 24:15; 60:15.
21 ກ ມທ 5:11–12.
ຂ ຄມພ ພິພາກສາ, ການພິພາກສາ, ຜູ້ພິພາກສາ.
22 ກ ອຟຊ 6:14; ຄພ 27:15–18.

ເຈົ້າ ຈະ ໄດ້ຮູ້ຈັກພຣະປະສົງຂອງພຣະອົງ
ກ່ຽວກັບພວກເຈົ້າ—
24 ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ
ມັນ ເປັນ ໜ້າ ທີ່ຂອງ ສາດສະໜາ ຈັກທີ່ ຈະ
ຊ່ວຍ ຄ້ຳ ຊູ ຄອບ ຄົວ ຂອງ ຄົນ ເຫລົ່າ ນັ້ນ
ແລະ ຄ້ຳຊູຄອບຄົວຂອງຄົນເຫລົ່ານັ້ນນຳ
ອີກຜູ້ທີ່ຖືກເອີ້ນ ແລະ ຈຳເປັນຕ້ອງສົ່ງໄປ
ສູ່ໂລກ ເພື່ອປະກາດພຣະກິດຕິຄຸນໃຫ້ແກ່
ໂລກ.
25 ດັ່ງນັ້ນ, ເຮົາ, ພຣະ ຜູ້ ເປັນ ເຈົ້າ, ຈຶ່ງ
ມອບ ບັນ ຍັດ ຂໍ້ ນີ້ ໃຫ້ ພວກ ເຈົ້າ, ວ່າ ພວກ
ເຈົ້າ ຈະ ໄດ້ ສະ ຖານ ທີ່ ໃຫ້ ຄອບ ຄົວ ຂອງ
ພວກເຈົ້າ, ຕາບໃດທີ່ພີ່ນ້ອງຂອງພວກເຈົ້າ
ຈະເປີດຫົວໃຈໃຫ້ພວກເຈົ້າ.
26 ແລະ ໃຫ້ ຄົນ ເຊັ່ນນັ້ນທຸກຄົນທີ່ສາ
ມາດໄດ້ສະຖານທີ່ໃຫ້ຄອບຄົວຂອງພວກ
ເຂົາ, ແລະ ໄດ້ຮັບການຄ້ຳຊູຈາກສາດສະ
ໜາຈັກ, ບໍ່ລະເລີຍຈາກການອອກໄປສູ່
ໂລກ, ບໍ່ວ່າຈະເປັນພາກຕາເວັນອອກ ຫລື
ພາກ ຕາ ເວັນ ຕົກ, ຫລື ພາກ ເໜືອ, ຫລື
ພາກໃຕ້ກໍຕາມ.
27 ໃຫ້ພວກເຂົາໝັ່ນຂໍ ແລ້ວພວກເຂົາ
ຈະໄດ້ຮັບ, ໝັ່ນເຄາະ ແລ້ວຈະມີຜູ້ໄຂປະຕູ
ໃຫ້ພວກເຂົາ, ແລະ ຖືກເຮັດໃຫ້ເປັນທີ່ຮູ້
ຈັກຈາກເບື້ອງບົນ, ແມ່ນແຕ່ໂດຍ [ກ]ພຣະຜູ້
ປອບໂຍນ, ບໍ່ວ່າພວກເຂົາຈະໄປບ່ອນໃດ
ກໍຕາມ.
28 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ທຸກໆຄົນ
ຜູ້ທີ່ໄດ້ຮັບໜ້າທີ່ໃຫ້ [ກ]ຈັດຫາໃຫ້ [ຂ]ຄອບຄົວ
ຂອງຕົນເອງ, ກໍໃຫ້ເຂົາຈັດຫາ, ແລະ ເຂົາ
ຈະບໍ່ມີທາງສູນເສຍມົງກຸດຂອງເຂົາ; ແລະ
ໃຫ້ເຂົາທຳງານໃນສາດສະໜາຈັກ.
29 ໃຫ້ ທຸກໆ ຄົນ [ກ]ພາກພຽນໃນທຸກສິ່ງ
ທັງປວງ. ແລະ [ຂ]ຄົນກຽດຄ້ານຈະບໍ່ມີບ່ອນ
ຢູ່ໃນສາດສະໜາຈັກ, ຍົກເວັ້ນແຕ່ພວກ
ເຂົາຈະກັບໃຈ ແລະ ປ່ຽນທາງເດີນຂອງ
ພວກເຂົາ.
30 ດັ່ງນັ້ນ, ໃຫ້ຜູ້ຮັບໃຊ້ຂອງເຮົາ ຊາຍ
ມັນ ຄາດເທີ ແລະ ຜູ້ຮັບໃຊ້ຂອງເຮົາ ອີເມີ
ແຣຣິສ ເປັນຄູ່ກັນໃນ ການປະຕິບັດສາດ
ສະໜາກິດ;
31 ແລະ ຜູ້ຮັບໃຊ້ຂອງເຮົາ ເອຊະຣາ ແຕ
ແລະ ຜູ້ຮັບໃຊ້ຂອງເຮົາ [ກ]ທອມມັສ ບີ ມາສ໌
ນຳອີກ;
32 ຜູ້ ຮັບ ໃຊ້ ຂອງ ເຮົາ ໄຣຣຳ ສະມິດ
ແລະ ຜູ້ຮັບໃຊ້ຂອງເຮົາ ເຣໂນນ ຄາຫູນ ນຳ
ອີກ;
33 ແລະ ຜູ້ຮັບໃຊ້ຂອງເຮົາ ແດນໂຍ ສະ
ແຕນຕັນ ແລະ ຜູ້ຮັບໃຊ້ຂອງເຮົາ ຊີມໍ ບຣັນ
ສັນ ນຳອີກ;
34 ແລະ ຜູ້ຮັບໃຊ້ຂອງເຮົາ ຊຽວເອສ໌ເຕີ
ສະມິດ ແລະ ຜູ້ຮັບໃຊ້ຂອງເຮົາ ກິດຽນ
ຄາດເທີ ນຳອີກ;
35 ແລະ ຜູ້ຮັບ ໃຊ້ ຂອງ ເຮົາ ຣັກ ໂກ ອີ
ເມສ໌ ແລະ ຜູ້ຮັບໃຊ້ຂອງເຮົາ ສະຕີບເວັນ
ເບີແນັດ ນຳອີກ;
36 ແລະ ຜູ້ ຮັບ ໃຊ້ ຂອງ ເຮົາ ໄມກາ ບີ
ແວວຕັນ ນຳອີກ ແລະ ຜູ້ຮັບໃຊ້ຂອງເຮົາ
ອີເດນ ສະມິດ ນຳອີກ. ແມ່ນເປັນດັ່ງນັ້ນ.
ອາແມນ.

27 *ກ* 2 ນຟ 32:5; ຄພ 8:2. ຄມພ ພຣະວິນຍານບໍລິສຸດ.
28 *ກ* 1 ຕມທ 5:8; ຄພ 83:2. *ຂ* ຄມພ ຄອບຄົວ.
29 *ກ* ຄມພ ພາກພຽນ, ຄວາມພາກພຽນ. *ຂ* ຄມພ ກຽດຄ້ານ, ຄວາມກຽດຄ້ານ.
31 *ກ* ຄມພ ມາສ໌, ທອມມັສ ບີ.

# ພາກທີ 76

*ພາບນິມິດທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 16 ເດືອນກຸມພາ, 1832. ໃນບົດຄຳນຳຂອງການບັນທຶກຂອງເພິ່ນຕໍ່ພາບນິມິດນີ້, ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ: "ເມື່ອຂ້າພະເຈົ້າກັບມາຈາກກອງປະຊຸມໃຫຍ່ທີ່ເມືອງອາມເຮີດ, ຂ້າພະເຈົ້າໄດ້ກັບຄືນໄປແປພຣະຄຳພີຕື່ມອີກ. ຈາກການເປີດເຜີຍຕ່າງໆທີ່ໄດ້ຮັບມາ, ເຫັນໄດ້ວ່າຈຸດສຳຄັນຫລາຍຂໍ້ກ່ຽວກັບຄວາມລອດຖືກນຳໄປຈາກ ພຣະຄຣິສຕະທຳຄຳພີ, ຫລື ຖືກສູນຫາຍໄປກ່ອນມັນໄດ້ຖືກຮວບຮວມໄວ້. ເຫັນໄດ້ຢ່າງແຈ່ມແຈ້ງອີງຕາມຄວາມຈິງຂອງມັນທີ່ເຫລືອຢູ່, ວ່າຖ້າຫາກພຣະເຈົ້າຈະປະທານລາງວັນໃຫ້ແກ່ທຸກຄົນຕາມການກະທຳຂອງຕົນໃນເນື້ອໜັງ ຄຳວ່າ 'ສະຫວັນ,' ຊຶ່ງໝາຍເຖິງບ້ານນິລັນດອນຂອງໄພ່ພົນຂອງພຣະເຈົ້າ, ຕ້ອງມີອານາຈັກຫລາຍກວ່າໜຶ່ງອານາຈັກ. ດັ່ງນັ້ນ, . . . ໃນຂະນະທີ່ແປພຣະທຳໂຢຮັນ, ຕົວຂ້າພະເຈົ້າເອງ ແລະ ແອວເດີ ຣິກດອນ ໄດ້ເຫັນພາບນິມິດດັ່ງຕໍ່ໄປນີ້." ຕອນທີ່ພາບນິມິດນີ້ ໄດ້ຖືກມອບໃຫ້, ສາດສະດາກຳລັງແປ ໂຢຮັນ 5:29 ຢູ່.*

*1–4, ພຣະຜູ້ເປັນເຈົ້າຄື ພຣະເຈົ້າ; 5–10, ຄວາມລຶກລັບຂອງອານາຈັກຈະຖືກເປີດເຜີຍໃຫ້ແກ່ຄົນທີ່ຊື່ສັດທັງປວງ; 11–17, ທຸກຄົນຈະອອກມາໃນການຟື້ນຄືນຊີວິດຂອງຄົນທ່ຽງທຳ ຫລື ຄົນບໍ່ທ່ຽງທຳ; 18–24, ຜູ້ອາໄສຂອງຫລາຍໆໂລກເປັນບຸດ ແລະ ທິດາທີ່ຖືກຳເນີດຂອງພຣະເຈົ້າຜ່ານການຊົດໃຊ້ ຂອງພຣະເຢຊູຄຣິດ; 25–29, ທູດອົງໜຶ່ງຂອງພຣະເຈົ້າໄດ້ຕົກ ແລະ ໄດ້ກາຍເປັນມານ; 30–49, ບຸດແຫ່ງຄວາມຈິບຫາຍທຸກທໍລະມານຈາກຄວາມອັບປະໂຫຍດນິລັນດອນ; ຄົນອື່ນທັງໝົດໄດ້ຮັບຄວາມລອດບາງລະດັບ; 50–70, ບັນລະຍາຍກ່ຽວກັບລັດສະໝີພາບ ແລະ ລາງວັນຂອງຄົນໃນອານາຈັກຊັ້ນສູງ; 71–80, ບັນລະຍາຍກ່ຽວກັບຜູ້ຄົນທີ່ຈະໄດ້ຮັບອານາຈັກຊັ້ນກາງເປັນມູນມໍລະດົກ; 81–113, ອະທິບາຍກ່ຽວກັບສະຖານະຂອງຄົນເຫລົ່ານັ້ນໃນລັດສະໝີພາບຂອງຊັ້ນຕ່ຳ, ຊັ້ນກາງ, ແລະ ຊັ້ນສູງ; 114–119, ຄົນຊື່ສັດອາດເຫັນ ແລະ ເຂົ້າໃຈຄວາມລຶກລັບແຫ່ງອານາຈັກຂອງພຣະເຈົ້າໂດຍອຳນາດຂອງພຣະວິນຍານສັກສິດ.*

1 ຈົ່ງ [ກ]ຟັງ, ໂອ້ ເຈົ້າຟ້າສະຫວັນ, ແລະ
ງ່ຽງຫູຟັງ, ໂອ້ ແຜ່ນດິນໂລກ, ແລະ ຈົ່ງປິ
ຕິຍິນດີເຈົ້າຜູ້ອາໄສ ຢູ່ໃນນັ້ນ, ເພາະພຣະ
ຜູ້ເປັນເຈົ້າຄື [ຂ]ພຣະເຈົ້າ, ແລະ ນອກຈາກ
ພຣະອົງແລ້ວ [ຄ]ບໍ່ມີ [ງ]ພຣະຜູ້ຊ່ວຍໃຫ້ລອດ.
2 [ກ]ຍິ່ງໃຫຍ່ຄືປັນຍາຂອງພຣະອົງ, [ຂ]ໜ້າ
ອັດສະຈັນຄືວິທີທາງຂອງພຣະອົງ, ແລະ
ຂອບເຂດຂອງການກະທຳຂອງພຣະອົງ
ນັ້ນບໍ່ມີໃຜຈະຮູ້ໄດ້.
3 [ກ] ພຣະ ປະສົງ ຂອງ ພຣະ ອົງ ບໍ່ ລົ້ມ
ເຫລວ, ທັງບໍ່ມີຜູ້ໃດສາມາດຢຸດຢັ້ງພຣະ
ຫັດຂອງພຣະອົງໄດ້.

**76** 1 *ກ* ອຊຢ 1:2.
*ຂ* ຢມຢ 10:10.
ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບຸດ.
*ຄ* ອຊຢ 43:11; ຮສອ 13:4.
*ງ* ຄມພ ພຣະຜູ້ຊ່ວຍໃຫ້ລອດ.
2 *ກ* 2 ນຟ 2:24; ຄພ 38:1–3.
*ຂ* ພນມ 15:3.
3 *ກ* 1 ກສ 8:56; ຄພ 1:38; 64:31.

4 ຈາກຊົ່ວນິລັນດອນເຖິງຊົ່ວນິລັນດອນ
ພຣະອົງ ກເໝືອນເດີມ, ແລະ ເດືອນປີຂອງ
ພຣະອົງບໍ່ມີວັນ ຂສິ້ນສຸດ.
5 ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້—
ເຮົາ, ພຣະຜູ້ເປັນເຈົ້າ, ມີ ກເມດຕາ ແລະ
ກະລຸນາຕໍ່ຄົນທີ່ ຂຢ້ານກົວເຮົາ, ແລະ ເບີກ
ບານທີ່ຈະໃຫ້ກຽດຄົນເຫລົ່ານັ້ນທີ່ ຄຮັບໃຊ້
ເຮົາໃນຄວາມຊອບທຳ ແລະ ໃນຄວາມຈິງ
ຈົນເຖິງທີ່ສຸດ.
6 ຍິ່ງ ໃຫຍ່ ຈະ ເປັນ ລາງ ວັນ ຂອງ ພວກ
ເຂົາ ແລະ ນິລັນດອນຈະເປັນ ກລັດສະໝີ
ພາບຂອງພວກເຂົາ.
7 ແລະ ຕໍ່ພວກເຂົາເຮົາຈະ ກເປີດເຜີຍ
ຂຄວາມ ລຶກ ລັບທັງ ປວງ, ແທ້ ຈິງແລ້ວ,
ຄວາມລຶກລັບທັງໝົດຂອງອານາຈັກຂອງ
ເຮົານັບຕັ້ງແຕ່ສະໄໝບູຮານ, ແລະ ຕໍ່ຍຸກທີ່
ຈະມາເຖິງ, ເຮົາຈະເຮັດໃຫ້ພວກເຂົາຮູ້ເຖິງ
ຄວາມເພິ່ງພໍໃຈແຫ່ງຄວາມປະສົງຂອງ
ເຮົາກ່ຽວກັບທຸກເລື່ອງທີ່ກ່ຽວຂ້ອງກັບອາ
ນາຈັກຂອງເຮົາ.
8 ແທ້ຈິງແລ້ວ, ແມ່ນແຕ່ການ ແປກປະ
ຫລາດ ຂອງຊົ່ວ ນິ ລັນດອນ ພວກເຂົາກໍ
ຈະຮູ້ຈັກ, ແລະ ສິ່ງທີ່ຈະມາເຖິງ ເຮົາຈະ
ສະແດງແກ່ພວກເຂົາ, ແມ່ນແຕ່ສິ່ງຕ່າງໆ
ຂອງຫລາຍລຸ້ນຄົນ.
9 ແລະ ກປັນຍາຂອງພວກເຂົາຈະຍິ່ງ
ໃຫຍ່, ແລະ ຂຄວາມເຂົ້າໃຈຂອງພວກເຂົາ
ຈະເອື້ອມເຖິງຟ້າສະຫວັນ; ແລະ ຢູ່ຕໍ່ໜ້າ
ພວກເຂົາ ປັນຍາຂອງຄົນສະຫລາດຈະ
ຄເສື່ອມສູນໄປ, ແລະ ຄວາມເຂົ້າໃຈຂອງ
ຄົນຮອບຄອບຈະບໍ່ມີຄຸນຄ່າ.
10 ເພາະໂດຍ ກວິນຍານຂອງເຮົາ, ເຮົາ
ຈະ ຂໃຫ້ຄວາມສະຫວ່າງແກ່ພວກເຂົາ,
ແລະ ໂດຍ ຄອຳນາດຂອງເຮົາ, ເຮົາຈະ
ເຮັດໃຫ້ຄວາມລັບແຫ່ງຄວາມປະສົງຂອງ
ເຮົາເປັນທີ່ຮູ້ຈັກແກ່ພວກເຂົາ—ແທ້ຈິງ
ແລ້ວ, ແມ່ນແຕ່ສິ່ງເຫລົ່ານັ້ນ ຊຶ່ງ ງຕາບໍ່ເຄີຍ
ເຫັນ, ຫູບໍ່ເຄີຍໄດ້ຍິນ, ທັງບໍ່ເຄີຍເຂົ້າໄປໃນ
ໃຈຂອງມະນຸດ.
11 ພວກ ເຮົາ, ໂຈເຊັບ ສະມິດ, ຜູ້ລູກ,
ແລະ ຊິດນີ ຣິກດອນ, ໂດຍຢູ່ ກໃນພຣະວິນ
ຍານ ໃນວັນທີສິບຫົກຂອງເດືອນກຸມພາ,
ໃນປີຂອງພຣະຜູ້ເປັນເຈົ້າຂອງພວກເຮົາ
ໜຶ່ງພັນແປດຮ້ອຍສາມສິບສອງ—
12 ໂດຍ ອຳນາດ ຂອງ ກພຣະວິນຍານ
ຂຕາຂອງພວກເຮົາໄດ້ເປີດ ແລະ ຄວາມ
ເຂົ້າໃຈຂອງພວກເຮົາໄດ້ຮັບຄວາມສະ
ຫວ່າງ, ເພື່ອວ່າຈະໄດ້ເຫັນ ແລະ ເຂົ້າໃຈ
ເລື່ອງຂອງພຣະເຈົ້າ—
13 ແມ່ນແຕ່ເລື່ອງເຫລົ່ານັ້ນ ຊຶ່ງຕັ້ງແຕ່
ຕົ້ນກ່ອນ ໂລກມີມາ, ຊຶ່ງຖືກແຕ່ງຕັ້ງຂຶ້ນ
ໂດຍພຣະບິດາ, ຜ່ານພຣະບຸດອົງດຽວທີ່ຖື

4 ກ ຮຣ 13:8; ຄພ 35:1; 38:1–4; 39:1–3.
ຂ ພສສ 102:25–27; ຮຣ 1:12.
5 ກ ອພຍ 34:6; ພສສ 103:8. ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
ຂ ພບຍ 6:13; ຢຊ 4:23–24. ຄມພ ຄາລະວະ, ຄວາມຄາລະວະ; ຢ້ານກົວ, ຄວາມຢ້ານກົວ.
ຄ ຄພ 4:2.
6 ກ ຄມພ ລັດສະໝີພາບຂອງຊັ້ນສູງ.
7 ກ ຄພ 42:61; 59:4; 98:12; 121:26–33.
ຂ ຄມພ ຄວາມລຶກລັບຂອງພຣະເຈົ້າ.
9 ກ ຄມພ ສະຕິປັນຍາ.
ຂ ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
ຄ ອຊຢ 29:14; 2 ນຟ 9:28–29.
10 ກ ມຣນ 10:5.
ຂ ຄມພ ປະຈັກພະຍານ; ເປີດເຜີຍ, ການເປີດເຜີຍ.
ຄ ຄມພ ອຳນາດ.
ງ ອຊຢ 64:4; 1 ກຣທ 2:9; 3 ນຟ 17:15–17; ຄພ 76:114–116.
11 ກ ພນມ 1:10.
12 ກ ຄມພ ການປ່ຽນສະພາບ.
ຂ ຄພ 110:1; 137:1; 138:11, 29.

ກຳເນີດຂອງພຣະອົງ, ຜູ້ຢູ່ໃນຊວງອົກຂອງ
ພຣະບິດາ, ແມ່ນແຕ່ [ກ]ຕັ້ງແຕ່ຕົ້ນ;
14 ຜູ້ທີ່ພວກເຮົາກ່າວເປັນພະຍານເຖິງ;
ແລະ ພະຍານຊຶ່ງພວກເຮົາກ່າວຄືຄວາມ
ສົມບູນແຫ່ງພຣະກິດຕິຄຸນຂອງພຣະເຢຊູ
ຄຣິດ, ຜູ້ເປັນພຣະບຸດ, ຜູ້ຊຶ່ງພວກເຮົາໄດ້
ເຫັນ ແລະ ຜູ້ຊຶ່ງພວກເຮົາໄດ້ [ກ]ສົນທະນາ
ນຳ ໃນ [ຂ]ພາບນິມິດແຫ່ງສະຫວັນ.
15 ເພາະໃນຂະນະທີ່ພວກເຮົາເຮັດວຽກ
ງານ [ກ]ການແປຢູ່ນັ້ນ, ຊຶ່ງພຣະຜູ້ເປັນເຈົ້າ
ໄດ້ມອບໝາຍໃຫ້ແກ່ພວກເຮົາ, ພວກເຮົາ
ໄດ້ມາເຖິງຂໍ້ທີຊາວເກົ້າໃນບົດທີຫ້າຂອງ
ໂຢຮັນ, ຊຶ່ງໄດ້ມອບໃຫ້ແກ່ພວກເຮົາດັ່ງຕໍ່
ໄປນີ້—
16 ໂດຍກ່າວເຖິງການຟື້ນຄືນຊີວິດຂອງ
ຄົນຕາຍ, ກ່ຽວກັບຜູ້ຄົນເຫລົ່ານັ້ນທີ່ຈະໄດ້
[ກ]ຍິນສຸລະສຽງຂອງ [ຂ]ບຸດມະນຸດ:
17 ແລະ ຈະໄດ້ອອກມາ; ບັນດາຜູ້ທີ່ເຮັດ
[ກ]ການດີ, ກໍ [ຂ]ຄືນມາສູ່ຊີວິດຂອງຄົນ [ຄ]ທ່ຽງ
ທຳ; ແລະ ບັນດາຜູ້ທີ່ເຮັດການຊົ່ວ, ກໍຄືນ
ມາສູ່ຊີວິດຂອງຄົນທີ່ບໍ່ທ່ຽງທຳ.
18 ບັດ ນີ້ ສິ່ງ ນີ້ ເຮັດ ໃຫ້ ພວກ ເຮົາ ປະ
ຫລາດໃຈ, ເພາະມັນຖືກມອບໃຫ້ແກ່ພວກ
ເຮົາໂດຍພຣະວິນຍານ.
19 ແລະ ໃນຂະນະທີ່ພວກເຮົາ [ກ]ຄຶດ
ໄຕ່ຕອງກ່ຽວກັບສິ່ງເຫລົ່ານີ້, ພຣະຜູ້ເປັນ
ເຈົ້າໄດ້ສຳພັດຕາແຫ່ງຄວາມເຂົ້າໃຈຂອງ
ພວກເຮົາ ແລະ ມັນໄດ້ເປີດ, ແລະ ລັດສະ
ໝີພາບຂອງພຣະຜູ້ເປັນເຈົ້າໄດ້ສ່ອງແສງ
ອ້ອມຮອບ.
20 ແລະ ພວກເຮົາໄດ້ເຫັນ [ກ]ລັດສະໝີ
ພາບ ຂອງ ພຣະບຸດ, ຢູ່ທາງ [ຂ]ເບື້ອງຂວາ
ພຣະ ຫັດ ຂອງ [ຄ]ພຣະບິດາ, ແລະ ໄດ້ຮັບ
ຄວາມບໍລິບູນຂອງພຣະອົງ;
21 ແລະ ໄດ້ ເຫັນ [ກ]ເຫລົ່າທູດບໍລິສຸດ,
ແລະ ຜູ້ ທີ່ ໄດ້ ຮັບ [ຂ]ການຊຳລະໃຫ້ບໍລິ
ສຸດ ຢູ່ ຕໍ່ ໜ້າບັນລັງຂອງ ພຣະອົງ, ພວມ
ນະມັດສະການ ພຣະເຈົ້າຢູ່, ແລະ ພຣະ
ເມສານ້ອຍ, ຜູ້ [ຄ]ນະມັດສະການພຣະອົງ
ຕະຫລອດການ ແລະ ຕະຫລອດໄປ.
22 ແລະ ບັດ ນີ້, ຫລັງ ຈາກ ປະຈັກ
ພະຍານຫລາຍຢ່າງທີ່ໃຫ້ໄວ້ເຖິງພຣະອົງ,
ນີ້ຄື [ກ]ປະຈັກພະຍານ, ສຸດທ້າຍຂອງທັງ
ໝົດ, ຊຶ່ງພວກເຮົາມອບໃຫ້ເຖິງພຣະອົງ:
ວ່າພຣະອົງ [ຂ]ຊົງພຣະຊົນ!
23 ເພາະ ພວກເຮົາ [ກ]ໄດ້ ເຫັນ ພຣະ
ອົງ, ແມ່ນແຕ່ຢູ່ທາງເບື້ອງຂວາພຣະຫັດ
ຂອງ [ຂ]ພຣະເຈົ້າ; ແລະ ພວກເຮົາໄດ້ຍິນ
ສຸລະສຽງກ່າວເປັນພະຍານວ່າ ພຣະອົງ
ເປັນ [ຄ]ພຣະອົງດຽວທີ່ຖືກຳເນີດຈາກພຣະ
ບິດາ—
24 ວ່າໂດຍ [ກ]ພຣະອົງ, ແລະ ຜ່ານພຣະ

13 *ກ* ມຊ 4:2.
14 *ກ* ຄພ 109:57.
*ຂ* ຄມພ ພາບນິມິດ.
15 *ກ* ຄມພ ການແປຂອງ ໂຈເຊັບ ສະມິດ (ປຈສ).
16 *ກ* ຢຮ 5:28.
*ຂ* ຄມພ ບຸດມະນຸດ.
17 *ກ* ຄມພ ວຽກງານ.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຄ* ກຈກ 24:15.
19 *ກ* ຄມພ ໄຕ່ຕອງ.
20 *ກ* ຄມພ ພຣະເຢຊູຄຣິດ—ລັດສະໝີພາບຂອງພຣະເຢຊູຄຣິດ.
*ຂ* ກຈກ 7:56.
*ຄ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
21 *ກ* ມທ 25:31; ຄພ 130:6–7; 136:37.
*ຂ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຄ* ຄມພ ນະມັດສະການ.
22 *ກ* ຄມພ ປະຈັກພະຍານ.
*ຂ* ຄພ 20:17.
23 *ກ* ຄມພ ພຣະເຢຊູຄຣິດ—ການປະກົດຕົວຂອງພຣະຄຣິດຫລັງຈາກຊີວິດມະຕະ.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ຄ* ຢຮ 1:14. ຄມພ ອົງດຽວທີ່ຖືກຳເນີດ.
24 *ກ* ຮຮ 1:1–3; 3 ນຟ 9:15; ຄພ 14:9; 93:8–10.

ອົງ, ແລະ ຈາກພຣະອົງ, [ຂ]ໂລກຕ່າງໆ ຈຶ່ງ
ຖືກສ້າງຂຶ້ນມາ, ແລະ ຜູ້ອາໄສຢູ່ໃນນັ້ນເປັນ
[ຄ]ບຸດ ແລະ ທິດາທີ່ຖືກກຳເນີດຂອງພຣະເຈົ້າ.
25 ແລະ ສິ່ງນີ້ພວກເຮົາກໍໄດ້ເຫັນເໝືອນ
ກັນ, ແລະ ກ່າວເປັນພະຍານ, ວ່າ [ກ]ທູດ
ອົງໜຶ່ງຂອງພຣະເຈົ້າຜູ້ເຄີຍມີສິດອຳນາດ
ໃນທີ່ປະທັບຂອງພຣະເຈົ້າ, ຜູ້ໄດ້ກະບົດ
ຕໍ່ພຣະບຸດອົງດຽວທີ່ຖືກກຳເນີດ ຜູ້ຊຶ່ງພຣະ
ບິດາຊົງຮັກ ແລະ ຜູ້ໄດ້ຢູ່ໃນຊວງອົກຂອງ
ພຣະບິດາ, ຖືກຊັດຖິ້ມລົງຈາກທີ່ປະທັບ
ຂອງພຣະເຈົ້າ ແລະ ພຣະບຸດ,
26 ແລະ ຖືກເອີ້ນວ່າຜູ້ຈິບຫາຍ, ເພາະ
ວ່າສະຫວັນໄດ້ຮ້ອງໄຫ້ເພາະລາວ—ລາວ
ຄື [ກ]ລູຊິເຟີ, ໂອລົດແຫ່ງເວລາເຊົ້າ.
27 ແລະ ພວກເຮົາໄດ້ເຫັນ, ແລະ ເບິ່ງ
ແມ, ລາວ [ກ]ຕົກແລ້ວ! ຕົກແລ້ວ, ແມ່ນແຕ່
ໂອລົດແຫ່ງເວລາເຊົ້າ!
28 ແລະ ໃນຂະນະທີ່ພວກເຮົາຍັງຢູ່ໃນ
ພຣະວິນຍານ, ພຣະຜູ້ເປັນເຈົ້າໄດ້ບັນຊາ
ພວກເຮົາໃຫ້ຂຽນພາບນິມິດ; ເພາະພວກ
ເຮົາໄດ້ເຫັນຊາຕານ, [ກ]ງູດຶກດຳບັນໄຕນັ້ນ,
ແມ່ນແຕ່ [ຂ]ມານ, ຜູ້ [ຄ]ໄດ້ກະບົດຕໍ່ພຣະເຈົ້າ,
ແລະ ສະແຫວງຫາທີ່ຈະຍຶດເອົາອານາຈັກ
ຂອງພຣະເຈົ້າຂອງພວກເຮົາ ແລະ ພຣະ
ຄຣິດຂອງພຣະອົງ—
29 ດັ່ງນັ້ນ, ລາວຈຶ່ງເຮັດ [ກ]ສົງຄາມກັບໄພ່
ພົນຂອງພຣະເຈົ້າ, ແລະ ອ້ອມພວກເຂົາ
ໄວ້ທຸກດ້ານ.
30 ແລະ ພວກເຮົາໄດ້ເຫັນພາບນິມິດ
ແຫ່ງຄວາມທຸກທໍລະມານຂອງພວກນັ້ນ ຜູ້
ຊຶ່ງລາວໄດ້ເຮັດສົງຄາມນຳ ແລະ ໄດ້ຜ່າຍ
ແພ້, ເພາະສຸລະສຽງຂອງພຣະຜູ້ເປັນເຈົ້າ
ມາເຖິງພວກເຮົາດັ່ງນີ້:
31 ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກ່ຽວກັບ
ທຸກຄົນຜູ້ຮູ້ຈັກອຳນາດຂອງເຮົາ, ແລະ ຖືກ
ເຮັດໃຫ້ເປັນຜູ້ຮັບສ່ວນນັ້ນ, ແລະ ຍອມຕົນ
ໂດຍອຳນາດຂອງມານທີ່ຈະ [ກ]ຜ່າຍແພ້,
ແລະ ປະຕິເສດຄວາມຈິງ ແລະ ທ້າທາຍ
ອຳນາດຂອງເຮົາ—
32 ພວກ ເຂົາ ຄື ຜູ້ ທີ່ ເປັນ [ກ]ບຸດ ແຫ່ງ
[ຂ]ຄວາມຈິບຫາຍ, ກ່ຽວກັບຜູ້ທີ່ເຮົາກ່າວວ່າ
ມັນຈະດີກວ່າຖ້າຫາກພວກເຂົາບໍ່ໄດ້ເກີດ
ມາ;
33 ເພາະພວກເຂົາເປັນພາຊະນະແຫ່ງ
ພຣະພິໂລດ, ຖືກກຳນົດໃຫ້ຮັບເອົາພຣະພິ
ໂລດຂອງພຣະເຈົ້າ, ພ້ອມກັບມານ ແລະ ບໍ
ລິວານຂອງມັນໃນຊົ່ວນິລັນດອນ;
34 ກ່ຽວກັບຜູ້ທີ່ເຮົາໄດ້ກ່າວມາ ບໍ່ມີ
[ກ]ການໃຫ້ອະໄພຢູ່ໃນໂລກນີ້ ທັງບໍ່ມີຢູ່ໃນ
ໂລກທີ່ຈະມາເຖິງ—
35 ໂດຍທີ່ໄດ້ [ກ]ປະຕິເສດພຣະວິນຍານ
ສັກສິດຫລັງຈາກໄດ້ຮັບມັນແລ້ວ, ແລະ
ໂດຍທີ່ໄດ້ປະຕິເສດພຣະບຸດອົງດຽວທີ່ຖື
ກຳເນີດຈາກພຣະບິດາ, ໂດຍທີ່ໄດ້ [ຂ]ຄຶງ
ພຣະອົງສຳລັບຕົນເອງ ແລະ ເຍາະເຍີ້ຍ
ພຣະອົງໃຫ້ອັບອາຍ.

24 ຂ ມຊ 1:31–33; 7:30.
ຄມພ ສ້າງ, ການສ້າງ.
ຄ ກຈກ 17:28, 29;
ຮຣ 12:9.
ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
25 ກ ຄພ 29:36–39;
ມຊ 4:1–4.
ຄມພ ມານ.
26 ກ ອຊຢ 14:12–17.
ຄມພ ລູຊິເຟີ.
27 ກ ລກ 10:18.
28 ກ ພນມ 12:9.
ຂ ຄມພ ມານ.
ຄ ຄມພ ສົງຄາມໃນສະຫວັນ.
29 ກ ພນມ 13:7;
2 ນຟ 2:18; 28:19–23.
31 ກ ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
32 ກ ຄມພ ບຸດແຫ່ງ ຄວາມຈິບຫາຍ.
ຂ ຄພ 76:26; ມຊ 5:22–26.
34 ກ ມທ 12:31–32.
ຄມພ ອະໄພ, ໃຫ້ອະໄພ.
35 ກ 2 ປຕ 2:20–22;
ແອວ 39:6.
ຄມພ ບາບທີ່ອະໄພໃຫ້ບໍ່ໄດ້.
ຂ ຮຣ 6:4–6; 1 ນຟ 19:7;
ຄພ 132:27.

36 ພວກເຂົາເຫລົ່ານີ້ຄືຄົນທີ່ຈະອອກໄປ
ສູ່ [ກ]ທະເລໄຟ ແລະ ມາດ, ພ້ອມກັບມານ
ແລະ ບໍລິວານຂອງມັນ—
37 ແລະ ພວກເຂົາເທົ່ານັ້ນຜູ້ຊຶ່ງ [ກ]ຄວາມ
ຕາຍຄັ້ງທີສອງຈະມີອຳນາດເໜືອກວ່າ;
38 ແທ້ຈິງແລ້ວ, ຕາມຄວາມຈິງ, [ກ]ພວກ
ເຂົາ ເທົ່ານັ້ນ ທີ່ ຈະ ບໍ່ຖືກໄຖ່ໃນເວລາອັນ
ເໝາະສົມຂອງ ພຣະຜູ້ ເປັນເຈົ້າ, ຫລັງ
ຄວາມທຸກທໍລະມານແຫ່ງພຣະພິໂລດຂອງ
ພຣະອົງ.
39 ເພາະພວກທີ່ເຫລືອຢູ່ທັງໝົດຈະຖືກ
[ກ]ນຳອອກມາໂດຍ [ຂ]ການຟື້ນຄືນຊີວິດຈາກ
ຄວາມຕາຍ, ຜ່ານໄຊຊະນະ ແລະ ລັດສະ
ໝີພາບຂອງ [ຄ]ພຣະເມສານ້ອຍ, ຜູ້ໄດ້ຖືກ
ປະຫານ, ຜູ້ເຄີຍຢູ່ໃນຊວງອົກຂອງພຣະ
ບິດາກ່ອນໂລກຕ່າງໆໄດ້ຖືກສ້າງ.
40 ແລະ ນີ້ຄື [ກ]ພຣະກິດຕິຄຸນ, ຂ່າວອັນ
ໜ້າຊື່ນຊົມ, ຊຶ່ງສຽງທີ່ອອກຈາກສະຫວັນ
ໄດ້ກ່າວເປັນພະຍານຕໍ່ພວກເຮົາ—
41 ວ່າພຣະອົງໄດ້ມາສູ່ໂລກ, ແມ່ນແຕ່
ພຣະເຢຊູ, ເພື່ອຖືກ [ກ]ຄຶງເພື່ອໂລກ, ແລະ
ເພື່ອ [ຂ]ຮັບ ເອົາບາບຂອງ [ຄ]ໂລກ, ແລະ
ເພື່ອ [ງ]ເຮັດໃຫ້ໂລກບໍລິສຸດ, ແລະ ເພື່ອ
[ຈ]ຊຳລະລ້າງມັນຈາກຄວາມບໍ່ຊອບທຳທັງ
ໝົດ;
42 ວ່າໂດຍຜ່ານພຣະອົງ ທຸກຄົນຈະໄດ້
ຮັບ ການຊ່ວຍໃຫ້ [ກ]ລອດ ຜູ້ຊຶ່ງພຣະບິດາ
ໄດ້ໃຫ້ຢູ່ໃນອຳນາດຂອງພຣະອົງ ແລະ ຖືກ
ສ້າງໂດຍພຣະອົງ;
43 ຜູ້ ທີ່ ສັນ ລະ ເສີນ ພຣະ ບິດາ, ແລະ
ຊ່ວຍ ໃຫ້ ວຽກ ງານ ທຸກ ຢ່າງ ໃນ ພຣະ ຫັດ
ຂອງພຣະອົງລອດ, ຍົກເວັ້ນແຕ່ພວກບຸດ
ແຫ່ງຄວາມຈິບຫາຍຜູ້ປະຕິເສດພຣະບຸດ
ຫລັງຈາກທີ່ພຣະບິດາໄດ້ເປີດເຜີຍພຣະ
ອົງ.
44 ດັ່ງນັ້ນ, ພຣະອົງຈຶ່ງຊ່ວຍໃຫ້ຄົນທັງ
ປວງໄດ້ຮັບຄວາມລອດ ຍົກເວັ້ນແຕ່ພວກ
ເຂົາ—ພວກເຂົາຈະອອກໄປຫາ [ກ]ການລົງ
ໂທດ [ຂ]ອັນເປັນນິດ, ຊຶ່ງເປັນການລົງໂທດ
ທີ່ບໍ່ສິ້ນສຸດ, ຊຶ່ງເປັນການລົງໂທດນິລັນ
ດອນ, ເພື່ອປົກຄອງກັບ [ຄ]ມານ ແລະ ບໍລິ
ວານຂອງມັນໃນຊົ່ວນິລັນດອນ, ບ່ອນທີ່
[ງ]ໂຕໜອນຂອງພວກເຂົາບໍ່ມີມື້ຕາຍ, ແລະ
ໄຟບໍ່ມີມື້ມອດ, ຊຶ່ງເປັນຄວາມທໍລະມານ
ຂອງພວກເຂົາ—
45 ແລະ [ກ]ການ ສິ້ນ ສຸດ ຂອງ ມັນ, ທັງ
ສະຖານທີ່ຂອງມັນ, ທັງຄວາມທໍລະມານ
ຂອງມັນ, ບໍ່ມີຄົນໃດຮູ້;
46 ທັງ ບໍ່ ເຄີຍ ເປີດ ເຜີຍ ມັນ, ທັງບໍ່ ເປີດ
ເຜີຍ ມັນ, ທັງຈະບໍ່ ມີວັນເປີດເຜີຍມັນແກ່
ມະນຸດ, ຍົກ ເວັ້ນແຕ່ ຄົນ ເຫລົ່ານັ້ນທີ່ຖືກ
ເຮັດໃຫ້ເປັນຜູ້ຮັບສ່ວນຂອງສິ່ງນັ້ນ;

---

36 *ກ* ພນມ 19:20; 20:10; 21:8; 2 ນຟ 9:16; 28:23; ແອວ 12:16–18; ຄພ 63:17.
37 *ກ* ຄມພ ຄວາມຕາຍທາງວິນຍານ.
38 *ກ* ຄມພ ບຸດແຫ່ງຄວາມຈິບຫາຍ.
39 *ກ* ອສ ໄດ້ຮັບການໄຖ່; ເບິ່ງ ຂໍ້ທີ 38. ທຸກຄົນຈະຟື້ນຄືນຊີວິດ. ເບິ່ງ ແອວ 11:41–45. ຄມພ ມີຊີວິດຊີວາ.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຄ* ຄມພ ພຣະເຢຊູຄຣິດ.
40 *ກ* 3 ນຟ 27:13–22. ຄມພ ແຜນແຫ່ງການໄຖ່; ພຣະກິດຕິຄຸນ.
41 *ກ* ຄມພ ຄຶງ, ການຄຶງ.
*ຂ* ອຊຢ 53:4–12; ຮຣ 9:28.
*ຄ* 1 ຢຮ 2:1–2.
*ງ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຈ* ຄມພ ໄຖ່, ການໄຖ່, ຖືກໄຖ່.
42 *ກ* ຄມພ ລອດ, ຄວາມລອດ.
44 *ກ* ຄພ 19:6–12.
*ຂ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
*ຄ* ຄມພ ມານ.
*ງ* ອຊຢ 66:24; ມຣກ 9:43–48.
45 *ກ* ຄພ 29:28–29.

47 ເຖິງຢ່າງໃດກໍຕາມ, ເຮົາ, ພຣະຜູ້ເປັນ
ເຈົ້າ, ໄດ້ສະແດງມັນໃຫ້ຫລາຍຄົນເຫັນ
ໂດຍທາງພາບນິມິດ, ແຕ່ໄດ້ປິດມັນຄືນອີກ
ທັນທີ;
48 ດັ່ງນັ້ນ, ການສິ້ນສຸດ, ຄວາມກວ້າງ
ໃຫຍ່, ຄວາມສູງ, [ກ]ຄວາມເລິກ, ແລະ
ຄວາມທຸກທໍລະມານໃນນັ້ນ, ພວກເຂົາບໍ່
ເຂົ້າໃຈ, ທັງບໍ່ມີມະນຸດຄົນໃດເຂົ້າໃຈ ຍົກ
ເວັ້ນແຕ່ຄົນເຫລົ່ານັ້ນຜູ້ໄດ້ຮັບການ [ຂ]ແຕ່ງ
ຕັ້ງສູ່ [ຄ]ການກ່າວໂທດນີ້.
49 ແລະ ພວກເຮົາໄດ້ຍິນສຽງ, ກ່າວວ່າ:
ຈົ່ງຂຽນພາບນິມິດ, ເພາະເບິ່ງແມ, ນີ້ຄືການ
ສິ້ນສຸດຂອງພາບນິມິດແຫ່ງຄວາມທຸກທໍ
ລະມານຂອງຄົນອະທຳ.
50 ແລະ ພວກເຮົາກ່າວເປັນພະຍານອີກ
ເທື່ອໜຶ່ງ—ເພາະພວກເຮົາໄດ້ເຫັນ ແລະ
ໄດ້ຍິນ, ແລະ ນີ້ຄື [ກ]ປະຈັກພະຍານເຖິງ
ພຣະກິດຕິຄຸນຂອງພຣະຄຣິດກ່ຽວກັບຄົນ
ທີ່ຈະອອກມາໃນ [ຂ]ການຟື້ນຄືນຊີວິດຂອງ
ຄົນທ່ຽງທຳ—
51 ພວກເຂົາ ຄື ຜູ້ ທີ່ ໄດ້ ຮັບ ປະຈັກ
ພະຍານເຖິງພຣະເຢຊູ, ແລະ [ກ]ເຊື່ອໃນ
ພຣະນາມຂອງພຣະອົງ ແລະ ຮັບ [ຂ]ບັບຕິ
ສະມາຕາມ [ຄ]ວິທີການຝັງຂອງພຣະອົງ,
ໂດຍຖືກ [ງ]ຝັງໄວ້ໃນນ້ຳໃນພຣະນາມຂອງ
ພຣະອົງ, ແລະ ນີ້ຕາມບັນຍັດຊຶ່ງພຣະອົງ
ໄດ້ມອບໃຫ້—
52 ເພື່ອ ວ່າ ໂດຍ ການ ຮັກ ສາ ບັນ ຍັດ
ພວກເຂົາອາດຈະໄດ້ຮັບການ [ກ]ລ້າງ ແລະ
[ຂ]ຊຳລະຈາກບາບທັງໝົດຂອງພວກເຂົາ,
ແລະ ໄດ້ຮັບພຣະວິນຍານສັກສິດໂດຍ
ການວາງ [ຄ]ມືຂອງຄົນທີ່ໄດ້ຮັບການ [ງ]ແຕ່ງ
ຕັ້ງ ແລະ ຜະນຶກສູ່ [ຈ]ອຳນາດນີ້—
53 ແລະ ຄືຜູ້ທີ່ເອົາຊະນະໂດຍສັດທາ,
ແລະ [ກ]ຜະນຶກໂດຍ [ຂ]ພຣະວິນຍານສັກສິດ
ແຫ່ງຄຳສັນຍາ, ຊຶ່ງພຣະບິດາໄດ້ຫລັ່ງລົງ
ເພື່ອທຸກຄົນທີ່ທ່ຽງທຳ ແລະ ຈິງ.
54 ພວກເຂົາຄືຜູ້ທີ່ເປັນສາດສະໜາຈັກ
ຂອງ [ກ]ພຣະບຸດຫົວປີ.
55 ພວກເຂົາຄືຜູ້ທີ່ພຣະບິດາໄດ້ປະທານ
[ກ]ທຸກສິ່ງທັງປວງໄວ້ໃນມືຂອງພວກເຂົາ—
56 ພວກເຂົາຄືຜູ້ທີ່ເປັນ [ກ]ປະໂລຫິດ
ແລະ ບັນດາກະສັດ, ຜູ້ໄດ້ຮັບຄວາມບໍລິ
ບູນຂອງພຣະອົງ, ແລະ ລັດສະໝີພາບ
ຂອງພຣະອົງ;
57 ແລະ ເປັນ [ກ]ປະໂລຫິດຂອງພຣະຜູ້
ສູງສຸດ, ຕາມລະບຽບຂອງເມນຄີເສເດັກ,
ຊຶ່ງເປັນຕາມລະບຽບຂອງ [ຂ]ເອນົກ, ຊຶ່ງເປັນ
ຕາມ [ຄ]ລະບຽບຂອງພຣະບຸດອົງດຽວທີ່ຖື
ກຳເນີດ.

48 *ກ* ພນມ 20:1.
*ຂ* ອສ ຖືກຕັດສິນ, ຖືກສັ່ງ.
*ຄ* ແອວ 42:22.
50 *ກ* ຄມພ ປະຈັກພະຍານ.
*ຂ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
51 *ກ* ຄພ 20:25–27, 37.
*ຂ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຄ* ຄພ 128:13.
*ງ* ຣມ 6:3–5.
ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ.
52 *ກ* 2 ນຟ 9:23;
ມຣນ 8:25–26.
*ຂ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຄ* ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ;
ມື, ການວາງ.
*ງ* ຄມພ ແຕ່ງຕັ້ງ,
ການແຕ່ງຕັ້ງ.
*ຈ* ຄມພ ສິດອຳນາດ.
53 *ກ* ຄມພ ຜະນຶກ, ການຜະນຶກ.
*ຂ* ອຟຊ 1:13;
ຄພ 88:3–5.
ຄມພ ພຣະວິນຍານສັກສິດແຫ່ງຄຳສັນຍາ.
54 *ກ* ຮຣ 12:23;
ຄພ 93:21–22.
ຄມພ ລູກກົກ.
55 *ກ* 2 ປຕ 1:3–4;
ຄພ 50:26–28; 84:35–38.
56 *ກ* ອພຍ 19:6;
ພນມ 1:5–6; 20:6.
57 *ກ* ຄມພ ປະໂລຫິດ, ຖານະປະໂລຫິດແຫ່ງເມນຄີເສເດັກ.
*ຂ* ປຖກ 5:21–24.
ຄມພ ເອນົກ.
*ຄ* ຄພ 107:1–4.

58 ດັ່ງນັ້ນ, ດັ່ງທີ່ມີຂຽນໄວ້, ພວກເຂົາ
ເປັນ [ກ]ພຣະເຈົ້າ, ແມ່ນແຕ່ເປັນ [ຂ]ບຸດຂອງ
[ຄ]ພຣະເຈົ້າ—
59 ດັ່ງນັ້ນ, [ກ]ທຸກສິ່ງທັງປວງເປັນຂອງ
ພວກເຂົາ, ບໍ່ວ່າຊີວິດ ຫລື ຄວາມຕາຍ, ຫລື
ສິ່ງໃນປະຈຸບັນ, ຫລື ສິ່ງທີ່ຈະມາເຖິງ, ທັງ
ໝົດເປັນຂອງພວກເຂົາ ແລະ ພວກເຂົາ
ເປັນຂອງພຣະຄຣິດ, ແລະ ພຣະຄຣິດເປັນ
ຂອງພຣະເຈົ້າ.
60 ແລະ ພວກເຂົາຈະ [ກ]ເອົາຊະນະທຸກ
ສິ່ງທັງປວງ.
61 ດັ່ງນັ້ນ, ຢ່າໃຫ້ມະນຸດຄົນໃດ [ກ]ສັນ
ລະເສີນມະນຸດ, ແຕ່ໃຫ້ເຂົາ [ຂ]ສັນລະເສີນ
ພຣະເຈົ້າ, ຜູ້ທີ່ຈະ [ຄ]ປາບສັດຕູທັງມວນຢູ່
ໃຕ້ພຣະບາດຂອງພຣະອົງ.
62 ຜູ້ຄົນເຫລົ່ານີ້ຈະ [ກ]ອາໄສຢູ່ໃນ [ຂ]ທີ່ປະ
ທັບຂອງພຣະເຈົ້າ ແລະ ພຣະຄຣິດຂອງ
ພຣະອົງຕະຫລອດການ ແລະ ຕະຫລອດ
ໄປ.
63 [ກ]ຜູ້ຄົນເຫລົ່ານີ້ຄືຜູ້ທີ່ພຣະອົງຈະພາ
ມາກັບພຣະອົງ, ເມື່ອພຣະອົງ [ຂ]ສະເດັດ
ມາໃນໝູ່ເມກແຫ່ງຟ້າສະຫວັນ ເພື່ອ [ຄ]ປົກ
ຄອງຜູ້ຄົນຂອງພຣະອົງຢູ່ເທິງແຜ່ນດິນ
ໂລກ.
64 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຈະມີສ່ວນໃນ
[ກ]ການຟື້ນຄືນຊີວິດຄັ້ງທຳອິດ.
65 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຈະອອກມາໃນ
[ກ]ການຟື້ນຄືນຊີວິດຂອງຄົນທ່ຽງທຳ.
66 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ມາຫາ [ກ]ພູ
[ຂ]ຊີໂອນ, ແລະ ມາຫາເມືອງຂອງພຣະເຈົ້າ
ທີ່ຊົງພຣະຊົນຢູ່, ສະຖານທີ່ແຫ່ງສະຫວັນ,
ສັກສິດທີ່ສຸດເໜືອກວ່າສະຖານທີ່ທັງ
ປວງ.
67 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ມາຫາເຫລົ່າທູດ
ຊຶ່ງມີຈຳນວນຈົນນັບບໍ່ຖ້ວນ, ມາຫາການ
ຊຸມນຸມໃຫຍ່ ແລະ ສາດສະໜາຈັກຂອງ
[ກ]ເອນົກ, ແລະ ຂອງ [ຂ]ພຣະບຸດຫົວປີ.
68 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຊື່ຂອງພວກເຂົາ
ຖືກ [ກ]ຂຽນໄວ້ຢູ່ໃນສະຫວັນ, ບ່ອນທີ່ພຣະ
ເຈົ້າ ແລະ ພຣະຄຣິດເປັນ [ຂ]ຜູ້ພິພາກສາ
ຂອງຄົນທັງປວງ.
69 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ [ກ]ທ່ຽງທຳ ແລະ
ຖືກເຮັດໃຫ້ [ຂ]ດີພ້ອມທຸກຢ່າງຜ່ານພຣະ
ເຢຊູຜູ້ເປັນກາງຂອງ [ຄ]ພັນທະສັນຍາໃໝ່,

58 *ກ* ພສສ 82:1, 6; ຢຮ 10:34–36. ຄມພ ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ.
*ຂ* ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
*ຄ* ຄພ 121:32. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
59 *ກ* ລກ 12:42–44; 3 ນຟ 28:10; ຄພ 84:36–38.
60 *ກ* ພນມ 3:5; 21:7.
61 *ກ* ຢຮ 5:41–44; 1 ກຣທ 3:21–23.
*ຂ* 2 ນຟ 33:6; ແອວ 26:11–16. ຄມພ ລັດສະໝີພາບ.
*ຄ* ຄພ 49:6.
62 *ກ* ພສສ 15:1–3; 24:3–4; 1 ນຟ 15:33–34; ມຊ 6:57.
*ຂ* ຄພ 130:7. ຄມພ ຊີວິດນິລັນດອນ.
63 *ກ* ຄພ 88:96–98. ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
*ຂ* ມທ 24:30.
*ຄ* ຄພ 58:22. ຄມພ ພຣະເຢຊູຄຣິດ—ການປົກຄອງຂອງພຣະຄຣິດໃນລະຫວ່າງພັນປີ.
64 *ກ* ພນມ 20:6.
65 *ກ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
66 *ກ* ອຊຢ 24:23; ຮຣ 12:22–24; ພນມ 14:1; ຄພ 84:2; 133:56.
*ຂ* ຄມພ ຊີໂອນ.
67 *ກ* ຄພ 45:9–12.
*ຂ* ຮຣ 12:23; ຄພ 76:53–54. ຄມພ ລູກກົກ.
68 *ກ* ຄມພ ໜັງສືທະບຽນແຫ່ງຊີວິດ.
*ຂ* ຄມພ ພຣະເຢຊູຄຣິດ—ພິພາກສາ.
69 *ກ* ຄພ 129:3; 138:12.
*ຂ* ມຣນ 10:32–33.
*ຄ* ຄມພ ພັນທະສັນຍາໃໝ່ ແລະ ເປັນນິດ.

ຜູ້ໄດ້ເຮັດໃຫ້ເກີດ [ງ]ການຊົດໃຊ້ທີ່ສົມບູນ
ຜ່ານການຫລັ່ງ [ຈ]ໂລຫິດຂອງພຣະອົງເອງ.

70 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຮ່າງກາຍຂອງ
ພວກເຂົາເປັນຂອງ [ກ]ຊັ້ນສູງ, ຊຶ່ງ [ຂ]ລັດສະ
ໝີພາບຂອງພວກເຂົາເປັນຂອງ [ຄ]ດວງຕາ
ເວັນ, ແມ່ນແຕ່ລັດສະໝີພາບຂອງພຣະ
ເຈົ້າ, ຜູ້ສູງສຸດຂອງທຸກສິ່ງທັງປວງ, ຊຶ່ງລັດ
ສະໝີພາບຂອງຜູ້ນັ້ນເປັນຄືດວງຕາເວັນ
ໃນທ້ອງນະພາ ຊຶ່ງມີຂຽນໄວ້ວ່າເປັນແບບ
ນັ້ນ.

71 ແລະ ອີກເທື່ອໜຶ່ງ, ພວກເຮົາໄດ້ເຫັນ
ໂລກ [ກ]ຊັ້ນກາງ, ແລະ ຈົ່ງເບິ່ງ ແລະ ເບິ່ງ
ແມ, ຜູ້ຄົນເຫລົ່ານີ້ຄືຜູ້ທີ່ເປັນຂອງໂລກ
ຊັ້ນກາງ, ຊຶ່ງລັດສະໝີພາບຂອງພວກເຂົາ
ແຕກຕ່າງຈາກຂອງສາດສະໜາຈັກຂອງ
ພຣະບຸດຫົວປີ ຜູ້ຊຶ່ງໄດ້ຮັບຄວາມສົມບູນ
ຂອງພຣະບິດາ, ແມ່ນແຕ່ລັດສະໝີພາບ
ຂອງ [ຂ]ດວງເດືອນ ແຕກຕ່າງຈາກດວງຕາ
ເວັນໃນທ້ອງນະພາ.

72 ຈົ່ງເບິ່ງ, ຜູ້ຄົນເຫລົ່ານີ້ຄືຜູ້ທີ່ໄດ້ຕາຍ
[ກ]ປາດສະຈາກ [ຂ]ກົດ;

73 ແລະ ພວກເຂົາເປັນ [ກ]ວິນຍານຂອງ
ມະນຸດທີ່ຖືກຮັກສາໄວ້ໃນ [ຂ]ຄຸກ, ຜູ້ຊຶ່ງພຣະ
ບຸດໄດ້ໄປຢ້ຽມຢາມ, ແລະ ໄດ້ [ຄ]ສັ່ງສອນ
[ງ]ພຣະກິດຕິຄຸນໃຫ້ແກ່ພວກເຂົາ, ເພື່ອ
ພວກເຂົາຈະໄດ້ຮັບການພິພາກສາຕາມ
ມະນຸດໃນເນື້ອໜັງ;

74 ພວກເຂົາເປັນຜູ້ບໍ່ໄດ້ຮັບ [ກ]ປະຈັກ
ພະຍານເຖິງພຣະເຢຊູໃນເນື້ອໜັງ, ແຕ່ຕໍ່
ມາໄດ້ຮັບເອົາມັນ.

75 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ມີກຽດຢູ່ໃນແຜ່ນ
ດິນໂລກ, ຜູ້ຕາບອດໂດຍກົນອຸບາຍຂອງ
ມະນຸດ.

76 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ໄດ້ຮັບລັດສະໝີ
ພາບຂອງພຣະອົງ, ແຕ່ບໍ່ໄດ້ຮັບຄວາມສົມ
ບູນຂອງພຣະອົງ.

77 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ໄດ້ຮັບການມາປະ
ທັບຢູ່ຂອງພຣະບຸດ, ແຕ່ບໍ່ໄດ້ຮັບຄວາມສົມ
ບູນຂອງພຣະບິດາ.

78 ດັ່ງນັ້ນ, ພວກເຂົາຈຶ່ງມີ [ກ]ຮ່າງກາຍ
ຂອງຊັ້ນກາງ, ແລະ ບໍ່ມີຮ່າງກາຍຂອງຊັ້ນ
ສູງ, ແລະ ແຕກຕ່າງໃນລັດສະໝີພາບດັ່ງ
ດວງເດືອນແຕກຕ່າງຈາກດວງຕາເວັນ.

79 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ບໍ່ [ກ]ກ້າຫານໃນ
ປະຈັກພະຍານເຖິງພຣະເຢຊູ; ດັ່ງນັ້ນ,
ພວກເຂົາຈຶ່ງບໍ່ໄດ້ຮັບມົງກຸດເໜືອອານາ
ຈັກຂອງພຣະເຈົ້າຂອງເຮົາ.

80 ແລະ ບັດນີ້ ນີ້ຄືການສິ້ນສຸດຂອງ
ພາບນິມິດທີ່ພວກເຮົາໄດ້ເຫັນກ່ຽວກັບ
ໂລກຊັ້ນກາງ, ທີ່ພຣະຜູ້ເປັນເຈົ້າໄດ້ບັນຊາ
ພວກເຮົາໃຫ້ຂຽນ ໃນຂະນະທີ່ພວກເຮົາຍັງ
ຢູ່ໃນພຣະວິນຍານ.

81 ແລະ ອີກເທື່ອໜຶ່ງ, ພວກເຮົາໄດ້ເຫັນ
ລັດສະໝີພາບຂອງໂລກ [ກ]ຊັ້ນຕ່ຳ, ຊຶ່ງລັດ
ສະໝີພາບນັ້ນຕ່ຳກວ່າ, ແມ່ນແຕ່ເປັນລັດ
ສະໝີພາບຂອງດວງດາວ ແຕກຕ່າງຈາກ

69 ງ ຄມພ ຊົດໃຊ້, ການຊົດໃຊ້.
ຈ ຄມພ ເລືອດ, ໂລຫິດ.
70 ກ ຄພ 88:28–29; 131:1–4; 137:7–10.
ຄມພ ລັດສະໝີພາບຂອງຊັ້ນສູງ.
ຂ ຄພ 137:1–4.
ຄ ມທ 13:43.
71 ກ ຄພ 88:30.
ຄມພ ລັດສະໝີພາບຂອງຊັ້ນກາງ.
ຂ 1 ກຣທ 15:40–41.
72 ກ ຄພ 137:7, 9.
ຂ ຄມພ ກົດ.
73 ກ ແອວ 40:11–14.
ຄມພ ວິນຍານ.
ຂ ຄພ 88:99; 138:8.
ຄມພ ຄວາມລອດສຳລັບຄົນຕາຍ; ນະລົກ.
ຄ 1 ປຕ 3:19–20; 4:6; ຄພ 138:28–37.
ງ ຄມພ ພຣະກິດຕິຄຸນ.
74 ກ ຄມພ ປະຈັກພະຍານ.
78 ກ 1 ກຣທ 15:40–42.
79 ກ ຄພ 56:16.
81 ກ ຄພ 88:31.
ຄມພ ລັດສະໝີພາບຂອງຊັ້ນຕ່ຳ.

ລັດສະໝີພາບຂອງດວງເດືອນໃນທ້ອງນະ
ພາ.
82 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ບໍ່ໄດ້ຮັບເອົາພຣະ
ກິດຕິຄຸນຂອງພຣະຄຣິດ, ທັງບໍ່ໄດ້ຮັບເອົາ
[ກ]ປະຈັກພະຍານເຖິງພຣະເຢຊູ.
83 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ບໍ່ໄດ້ປະຕິເສດ
ພຣະວິນຍານສັກສິດ.
84 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຖືກໂຍນລົງ
[ກ]ນະລົກ.
85 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຈະບໍ່ຖືກໄຖ່ຈາກ
[ກ]ມານ ຈົນກວ່າເຖິງ [ຂ]ການຟື້ນຄືນຊີວິດຄັ້ງ
ສຸດທ້າຍ, ຈົນກວ່າພຣະຜູ້ເປັນເຈົ້າ, ແມ່ນ
ແຕ່ພຣະຄຣິດ [ຄ]ພຣະເມສານ້ອຍ, ຈະສຳ
ເລັດວຽກງານຂອງພຣະອົງກ່ອນ.
86 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ບໍ່ໄດ້ຮັບຄວາມ
ສົມບູນຂອງພຣະອົງໃນໂລກນິລັນດອນ,
ແຕ່ໄດ້ຮັບພຣະວິນຍານສັກສິດຜ່ານການ
ປະຕິບັດສາດສະໜາກິດຈາກໂລກຊັ້ນ
ກາງ;
87 ແລະ ໂລກຊັ້ນກາງຜ່ານ [ກ]ການປະຕິ
ບັດສາດສະໜາກິດຈາກໂລກຊັ້ນສູງ.
88 ແລະ ໂລກຊັ້ນຕ່ຳໄດ້ຮັບການປະຕິ
ບັດສາດສະໜາກິດຂອງມັນຈາກເຫລົ່າທູດ
ຜູ້ຖືກກຳນົດໃຫ້ປະຕິບັດສາດສະໜາກິດ
ແກ່ພວກເຂົາ, ຫລື ຜູ້ຖືກກຳນົດໃຫ້ເປັນ
ວິນຍານປະຕິບັດສາດສະໜາກິດແກ່ພວກ
ເຂົາ; ເພາະພວກເຂົາຈະເປັນທາຍາດແຫ່ງ
ຄວາມລອດ.
89 ແລະ ພວກເຮົາໄດ້ເຫັນດັ່ງນັ້ນ, ໃນ
ພາບນິມິດຈາກສະຫວັນ, ລັດສະໝີພາບ
ຂອງໂລກຊັ້ນຕ່ຳ, ຊຶ່ງເກີນກວ່າຄວາມເຂົ້າ
ໃຈທັງໝົດ;
90 ແລະ ບໍ່ມີໃຜຮູ້ມັນ ຍົກເວັ້ນແຕ່ຕໍ່ເຂົາ
ຜູ້ຊຶ່ງພຣະເຈົ້າໄດ້ເປີດເຜີຍມັນໃຫ້ຮູ້ເທົ່າ
ນັ້ນ.
91 ແລະ ພວກເຮົາໄດ້ເຫັນລັດສະໝີ
ພາບຂອງໂລກຊັ້ນກາງດັ່ງນັ້ນ ຊຶ່ງລື່ນ
ລັດສະໝີພາບຂອງໂລກຊັ້ນຕ່ຳໃນທຸກ
ສິ່ງ, ແມ່ນແຕ່ໃນລັດສະໝີພາບ, ແລະ ໃນ
ອຳນາດ, ແລະ ໃນພະລັງ, ແລະ ໃນການ
ຄອບຄອງ.
92 ແລະ ພວກເຮົາໄດ້ເຫັນລັດສະໝີ
ພາບຂອງໂລກຊັ້ນສູງດັ່ງນັ້ນ, ຊຶ່ງລື່ນໃນ
ທຸກສິ່ງ—ບ່ອນທີ່ພຣະເຈົ້າ, ແມ່ນແຕ່ພຣະ
ບິດາ, ປົກຄອງຢູ່ເທິງບັນລັງຂອງພຣະອົງ
ຕະຫລອດການ ແລະ ຕະຫລອດໄປ;
93 ຢູ່ຕໍ່ໜ້າບັນລັງຂອງພຣະອົງນັ້ນ ທຸກ
ສິ່ງກົ້ມຂາບລົງຢ່າງຖ່ອມຕົວດ້ວຍ [ກ]ຄວາມ
ຄາລະວະ, ແລະ ຖວາຍລັດສະໝີພາບແດ່
ພຣະອົງຕະຫລອດການ ແລະ ຕະຫລອດ
ໄປ.
94 ຜູ້ທີ່ອາໄສຢູ່ໃນ [ກ]ທີ່ປະທັບຂອງພຣະ
ອົງເປັນສາດສະໜາຈັກຂອງ [ຂ]ພຣະບຸດຫົວ
ປີ; ແລະ ພວກເຂົາເຫັນ ດັ່ງທີ່ພວກເຂົາຖືກ
ເຫັນ, ແລະ [ຄ]ຮູ້ດັ່ງທີ່ພວກເຂົາຖືກຮູ້, ໂດຍ
ໄດ້ຮັບຄວາມສົມບູນຂອງພຣະອົງ ແລະ
[ງ]ພຣະຄຸນຂອງພຣະອົງ;
95 ແລະ ພຣະອົງໃຫ້ພວກເຂົາ [ກ]ເທົ່າ
ທຽມກັນໃນອຳນາດ, ແລະ ໃນພະລັງ, ແລະ
ໃນການຄອບຄອງ.

---

82 *ກ* ຄພ 138:21.
84 *ກ* 2 ນຟ 9:12;
ແອວ 12:11.
ຄມພ ນະລົກ.
85 *ກ* ຄມພ ມານ.
*ຂ* ແອວ 11:41;
ຄພ 43:18; 88:100–101.
*ຄ* ຄມພ ພຣະເມສານ້ອຍ
ຂອງພຣະເຈົ້າ.
87 *ກ* ຄພ 138:37.
93 *ກ* ຄມພ ຄາລະວະ,
ຄວາມຄາລະວະ.
94 *ກ* ຄພ 130:7.
*ຂ* ຄມພ ລູກກົກ.
*ຄ* 1 ກຣທ 13:12.
*ງ* ຄມພ ພຣະຄຸນ.
95 *ກ* ຄພ 29:13; 78:5–7;
84:38; 88:107; 132:20.

96 ແລະ ລັດສະໝີພາບຂອງຊັ້ນສູງເປັນ
ຢ່າງໜຶ່ງ, ແມ່ນແຕ່ດັ່ງທີ່ລັດສະໝີພາບຂອງ
[ກ]ດວງຕາເວັນເປັນຢ່າງໜຶ່ງ.
97 ແລະ ລັດສະໝີພາບຂອງຊັ້ນກາງ
ເປັນຢ່າງໜຶ່ງ, ແມ່ນແຕ່ດັ່ງທີ່ລັດສະໝີພາບ
ຂອງດວງເດືອນເປັນຢ່າງໜຶ່ງ.
98 ແລະ ລັດສະໝີພາບຂອງຊັ້ນຕ່ຳເປັນ
ຢ່າງໜຶ່ງ, ແມ່ນແຕ່ດັ່ງທີ່ລັດສະໝີພາບຂອງ
ດວງດາວເປັນຢ່າງໜຶ່ງ; ເພາະດາວດວງ
ໜຶ່ງແຕກຕ່າງຈາກດາວອີກດວງໜຶ່ງໃນ
ລັດສະໝີພາບສັນໃດ, ແມ່ນແຕ່ຄົນໆໜຶ່ງ
ກໍແຕກຕ່າງຈາກອີກຄົນໜຶ່ງໃນລັດສະໝີ
ພາບສັນນັ້ນໃນໂລກຊັ້ນຕ່ຳ;
99 ເພາະຜູ້ຄົນເຫລົ່ານີ້ເປັນຄົນຂອງ
[ກ]ໂປໂລ, ແລະ ຂອງອາໂປໂລ, ແລະ ຂອງ
ເກຟາ.
100 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ກ່າວວ່າ ພວກ
ເຂົາເປັນຂອງຄົນນີ້ ແລະ ຂອງຄົນນັ້ນ—
ບາງຄົນເປັນຂອງພຣະຄຣິດ ແລະ ບາງຄົນ
ເປັນຂອງໂຢຮັນ, ແລະ ບາງຄົນເປັນຂອງ
ໂມເຊ, ແລະ ບາງຄົນເປັນຂອງອີລາຍ,
ແລະ ບາງຄົນເປັນຂອງເອຊາອັດ, ແລະ
ບາງຄົນເປັນຂອງເອຊາຢາ, ແລະ ບາງຄົນ
ເປັນຂອງເອນົກ;
101 ແຕ່ບໍ່ໄດ້ຮັບເອົາພຣະກິດຕິຄຸນ, ທັງ
ບໍ່ໄດ້ຮັບເອົາປະຈັກພະຍານເຖິງພຣະເຢຊູ,
ທັງບໍ່ໄດ້ຮັບເອົາສາດສະດາ, ທັງບໍ່ໄດ້ຮັບ
ເອົາ [ກ]ພັນທະສັນຍາອັນເປັນນິດ.
102 ທ້າຍທີ່ສຸດ, ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຈະ
ບໍ່ຖືກເຕົ້າໂຮມເຂົ້າກັບໄພ່ພົນຂອງພຣະ
ເຈົ້າ, ເພື່ອຖືກ [ກ]ຮັບຂຶ້ນໄປຍັງ [ຂ]ສາດສະ
ໜາຈັກຂອງພຣະບຸດຫົວປີ, ແລະ ຖືກຮັບ
ເຂົ້າໄປໃນເມກ.
103 [ກ]ຜູ້ຄົນເຫລົ່ານີ້ຄື [ຂ]ຄົນຂີ້ຕົວະ, ແລະ
ໝໍເວດມົນຄາຖາ, ແລະ [ຄ]ຄົນຫລິ້ນຊູ້ສູ່ຜົວ
ເມຍ, ແລະ ຄົນລ່ວງປະເວນີ, ແລະ ຄົນໃດ
ກໍຕາມທີ່ມັກ ແລະ ເວົ້າຕົວະ.
104 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ທົນຮັບ [ກ]ພຣະພິ
ໂລດຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ.
105 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ທົນຮັບ [ກ]ການ
ແກ້ແຄ້ນຂອງໄຟນິລັນດອນ.
106 ຜູ້ຄົນເຫລົ່ານີ້ຄືຜູ້ທີ່ຖືກໂຍນລົງ
[ກ]ນະລົກ ແລະ [ຂ]ທົນຮັບ [ຄ]ພຣະພິໂລດຂອງ
ພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່, ຈົນ
ກວ່າ [ງ]ຄວາມສົມບູນແຫ່ງເວລາ, ເມື່ອພຣະ
ຄຣິດຈະ [ຈ]ປາບສັດຕູທັງສິ້ນໃຫ້ຢູ່ໃຕ້ພຣະ
ບາດຂອງພຣະອົງ, ແລະ ຈະເຮັດໃຫ້ວຽກ
ງານຂອງພຣະອົງ [ສ]ຄົບບໍລິບູນ;
107 ເມື່ອພຣະອົງຈະມອບອານາຈັກ,
ແລະ ຖວາຍມັນໃຫ້ແກ່ພຣະບິດາ, ຢ່າງບໍ່
ມີບ່ອນຕຳນິ, ກ່າວວ່າ: ຂ້າພຣະອົງໄດ້ເອົາ
ຊະນະ ແລະ ໄດ້ຢຽບເຄື່ອງປັ່ນໝາກອະງຸ່ນ
ຄົນດຽວ, ແມ່ນແຕ່ [ກ]ເຄື່ອງ [ຂ]ປັ່ນໝາກ
ອະງຸ່ນແຫ່ງພຣະພິໂລດອັນຮ້າຍກາດຂອງ
ພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່.
108 ຈາກນັ້ນພຣະອົງຈະໄດ້ຮັບການ
ສວມມົງກຸດດ້ວຍມົງກຸດແຫ່ງລັດສະໝີ
ພາບຂອງພຣະອົງ, ເພື່ອນັ່ງຢູ່ເທິງ [ກ]ບັນລັງ

96 *ກ* 1 ກຣທ 15:40–41.
99 *ກ* 1 ກຣທ 3:4–7, 22.
101 *ກ* ຄມພ ພັນທະສັນຍາ ໃໝ່ ແລະ ເປັນນິດ.
102 *ກ* 1 ທສນ 4:16–17; ຄພ 88:96–98.
*ຂ* ຄພ 78:21.
103 *ກ* ພນມ 21:8; ຄພ 63:17–18.
*ຂ* ຄມພ ຕົວະ.
*ຄ* ຄມພ ຫລິ້ນຊູ້.
104 *ກ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
105 *ກ* ຢດ 1:7.
106 *ກ* ຄມພ ນະລົກ.
*ຂ* ຄພ 19:3–20.
*ຄ* ຄພ 87:6.
*ງ* ອຟຊ 1:10.
*ຈ* 1 ກຣທ 15:24–28.
*ສ* ຮຣ 10:14.
107 *ກ* ພນມ 19:15; ຄພ 88:106; 133:46–53.
*ຂ* ປຖກ 49:10–12; ອຊຢ 63:1–3.
108 *ກ* ຄພ 137:3.

ແຫ່ງ ອຳນາດ ຂອງ ພຣະ ອົງ ເພື່ອ ປົກ ຄອງ
ຕະຫລອດການ ແລະ ຕະຫລອດໄປ.
109 ແຕ່ ຈົ່ງ ເບິ່ງ, ແລະ ເບິ່ງ ແມ, ພວກ
ເຮົາໄດ້ເຫັນລັດສະໝີພາບ ແລະ ຜູ້ອາໄສ
ຂອງໂລກຊັ້ນຕ່ຳ, ວ່າພວກເຂົາມີຈຳນວນ
ຈົນນັບບໍ່ຖ້ວນດັ່ງດວງດາວໃນທ້ອງນະພາ
ແຫ່ງຟ້າສະຫວັນ, ຫລື ດັ່ງດິນຊາຍຢູ່ຝັ່ງ
ທະເລ;
110 ແລະ ໄດ້ ຍິນ ສຸ ລະ ສຽງ ຂອງ ພຣະ
ຜູ້ເປັນເຈົ້າກ່າວວ່າ: ພວກເຂົາເຫລົ່ານີ້ທັງ
ໝົດຈະຄຸ ເຂົ່າລົງ, ແລະ ທຸກຄົນຈະ [ກ]ສາ
ລະພາບ ຕໍ່ພຣະ ອົງຜູ້ ນັ່ງ ຢູ່ ເທິງບັນ ລັງ
ຕະຫລອດການ ແລະ ຕະຫລອດໄປ;
111 ເພາະພວກ ເຂົາຈະ ຖືກພິພາກສາ
ຕາມວຽກງານຂອງພວກເຂົາ, ແລະ ທຸກໆ
ຄົນ ຈະ ໄດ້ຮັບ ຕາມ [ກ]ວຽກງານຂອງຕົນ,
ຕາມການຄອບຄອງຂອງຕົນ, ໃນ [ຂ]ຜາ
ສາດຊຶ່ງໄດ້ຈັດຕຽມໄວ້ແລ້ວ;
112 ແລະ ພວກ ເຂົາຈະ ເປັນຜູ້ຮັບ ໃຊ້
ຂອງພຣະຜູ້ສູງສຸດ; ແຕ່ [ກ]ບ່ອນທີ່ພຣະເຈົ້າ
ແລະ ພຣະຄຣິດ [ຂ]ປະທັບຢູ່ ພວກເຂົາບໍ່ສາ
ມາດມາຫາ, ຕະຫລອດໄປເປັນນິດ.
113 ນີ້ຄືການ ສິ້ນສຸດຂອງພາບນິມິດທີ່
ພວກເຮົາໄດ້ເຫັນ, ຊຶ່ງພວກເຮົາໄດ້ຖືກບັນ
ຊາໃຫ້ຂຽນໃນຂະນະທີ່ ພວກເຮົາຍັງຢູ່ໃນ
ພຣະວິນຍານ.
114 ແຕ່ [ກ]ຍິ່ງ ໃຫຍ່ ແລະ ໜ້າ ອັດ ສະ
ຈັນຄືວຽກງານຂອງພຣະຜູ້ເປັນເຈົ້າ, ແລະ
[ຂ]ຄວາມລຶກລັບຂອງອານາຈັກຂອງພຣະ
ອົງ ຊຶ່ງພຣະອົງໄດ້ສະແດງແກ່ພວກເຮົາ,
ຊຶ່ງເກີນກວ່າຄວາມເຂົ້າໃຈທັງໝົດ ໃນລັດ
ສະໝີພາບ, ແລະ ໃນພະລັງ, ແລະ ໃນ
ການຄອບຄອງ;
115 ຊຶ່ງພຣະອົງໄດ້ບັນຊາພວກເຮົາບໍ່
ໃຫ້ຂຽນ ໃນຂະນະທີ່ພວກເຮົາຍັງຢູ່ໃນ
ພຣະວິນຍານ, ແລະ ຜິດ [ກ]ກົດສຳລັບ
ມະນຸດທີ່ຈະເອີ່ຍປາກ;
116 ທັງມະນຸດ ບໍ່ [ກ]ສາ ມາດ ທີ່ ຈະ ເຮັດ
ໃຫ້ສິ່ງເຫລົ່ານີ້ເປັນທີ່ຮູ້ຈັກໄດ້, ເພາະຈະ
ຫລຽວເຫັນ ແລະ [ຂ]ເຂົ້າໃຈມັນໄດ້ພຽງແຕ່
ໂດຍອຳນາດຂອງພຣະວິນຍານສັກສິດ
ເທົ່ານັ້ນ, ຊຶ່ງພຣະເຈົ້າໄດ້ປະທານໃຫ້ຜູ້ທີ່
ຮັກພຣະອົງ, ແລະ ເຮັດໃຫ້ຕົນເອງບໍລິສຸດ
ຢູ່ຕໍ່ພຣະພັກຂອງພຣະອົງ;
117 ພຣະອົງໄດ້ປະທານສິດທິພິເສດໃຫ້
ຄົນເຫລົ່ານັ້ນທີ່ຈະໄດ້ເຫັນ ແລະ ຮູ້ສຳລັບ
ຕົນເອງ;
118 ເພື່ອ ວ່າ ຜ່ານ ອຳນາດ ແລະ ການ
ສະແດງໃຫ້ປະຈັກຂອງພຣະວິນຍານ, ໃນ
ຂະນະທີ່ຢູ່ໃນເນື້ອໜັງ, ພວກເຂົາອາດສາ
ມາດທົນກັບການປະທັບຢູ່ຂອງພຣະອົງໄດ້
ໃນໂລກແຫ່ງລັດສະໝີພາບ.
119 ແລະ ຂໍ ໃຫ້ລັດສະໝີພາບ, ແລະ
ກຽດຕິຍົດ, ແລະ ການຄອບຄອງເປັນຂອງ
ພຣະເຈົ້າ ແລະ ພຣະເມສານ້ອຍຕະຫລອດ
ການ ແລະ ຕະຫລອດໄປ. ອາແມນ.

110 *ກ* ຟລປ 2:9–11;
ມຊຢ 27:31.
111 *ກ* ພນມ 20:12–13.
ຄມພ ວຽກງານ.
*ຂ* ຢຮ 14:2;
ຄພ 59:2; 81:6.
112 *ກ* ຄພ 29:29.
*ຂ* ພນມ 21:23–27.
114 *ກ* ພນມ 15:3;
ມມ 9:16–18;
ມຊ 1:3–5.
*ຂ* ຢຄ 4:8.
115 *ກ* 2 ກຣທ 12:4.
116 *ກ* 3 ນຟ 17:15–17;
19:32–34.
*ຂ* 1 ກຣທ 2:10–12.

# ພາກທີ 77

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ປະມານ ເດືອນມີນາ 1832. ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ, "ໂດຍການກ່ຽວເນື່ອງກັບການແປຂໍ້ພຣະຄຳພີ, ຂ້າພະເຈົ້າໄດ້ຮັບຄຳອະທິບາຍດັ່ງຕໍ່ໄປນີ້ກ່ຽວກັບພຣະທຳພຣະນິມິດຂອງໂຢຮັນ."*

*1–4, ສັດມີວິນຍານ ແລະ ຈະອາໄສຢູ່ໃນຄວາມສຸກນິລັນດອນ; 5–7, ແຜ່ນດິນໂລກນີ້ມີການດຳລົງຢູ່ທາງຝ່າຍໂລກເປັນເວລາ 7,000 ປີ; 8–10, ທູດຫລາຍອົງໄດ້ຟື້ນຟູພຣະກິດຕິຄຸນ ແລະ ໄດ້ປະຕິບັດສາດສະໜາກິດຢູ່ເທິງແຜ່ນດິນໂລກ; 11, ການປະທັບຕາ 144,000 ຄົນ; 12–14, ພຣະຄຣິດຈະສະເດັດມາໃນການເລີ່ມຕົ້ນຂອງພັນປີເທື່ອທີເຈັດ; 15, ສາດສະດາສອງທ່ານຈະຖືກຍົກຂຶ້ນໃຫ້ປະຊາຊາດຊາວຢິວ.*

1 ຄຳຖາມ. ແມ່ນຫຍັງຄື [ກ]ທະເລແກ້ວມະນີທີ່ໂຢຮັນກ່າວເຖິງໃນບົດທີ 4, ແລະ ຂໍ້ທີ 6 ໃນພຣະນິມິດ?

ຄຳຕອບ. ມັນຄື [ຂ]ແຜ່ນດິນໂລກ, ໃນສະພາບທີ່ບໍລິສຸດ, ອະມະຕະ, ແລະ [ຄ]ນິລັນດອນຂອງມັນ.

2 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດກ່ຽວກັບສັດສີ່ໂຕທີ່ກ່າວເຖິງຢູ່ໃນຂໍ້ດຽວກັນນັ້ນ?

ຄຳຕອບ. ມັນເປັນ [ກ]ຄຳປຽບທຽບ, ໃຊ້ໂດຍຜູ້ເປີດເຜີຍ, ໂຢຮັນ, ໃນການບັນຍາຍເຖິງ [ຂ]ສະຫວັນ, [ຄ]ທີ່ສຸຂະເສີມຂອງພຣະເຈົ້າ, [ງ]ຄວາມສຸກຂອງມະນຸດ, ແລະ ຂອງສັດ, ແລະ ຂອງສິ່ງທີ່ເລືອຄານ, ແລະ ຂອງຝູງນົກໃນອາກາດ; ຊຶ່ງສິ່ງທີ່ເປັນຝ່າຍວິນຍານມີຮູບລັກສະນະເປັນຄືກັນກັບສິ່ງທີ່ເປັນຝ່າຍໂລກ; ແລະ ສິ່ງທີ່ເປັນຝ່າຍໂລກມີຮູບລັກສະນະເປັນຄືກັນກັບສິ່ງທີ່ເປັນຝ່າຍວິນຍານ; [ຈ]ວິນຍານຂອງມະນຸດຄົນໜຶ່ງມີຮູບລັກສະນະເປັນຄືກັນກັບຕົວເຂົາ, ແລະ ວິນຍານຂອງ [ສ]ສັດກໍຄືກັນ, ແລະ ສັດສາວາສິ່ງອື່ນໆທຸກຊະນິດທີ່ພຣະເຈົ້າໄດ້ສ້າງ.

3 ຄຳຖາມ. ສັດສີ່ໂຕນັ້ນເປັນຕົວແທນໃຫ້ສັດໂຕໃດໂຕໜຶ່ງໂດຍສະເພາະບໍ, ຫລື ມັນເປັນຕົວແທນໃຫ້ສັດປະເພດໃດ ຫລື ຈຳພວກໃດຈຳພວກໜຶ່ງ?

ຄຳຕອບ. ມັນເປັນຕົວແທນໃຫ້ສັດສີ່ໂຕໂດຍສະເພາະ, ຊຶ່ງຖືກສະແດງແກ່ໂຢຮັນ, ເພື່ອເປັນຕົວແທນໃຫ້ແກ່ລັດສະໝີພາບຂອງປະເພດສັດທີ່ຢູ່ໃນຊາຕາກຳຫລື [ກ]ຂອບເຂດຂອງການສ້າງ, ໃນຄວາມມ່ວນຊື່ນກັບ [ຂ]ຄວາມສຸກນິລັນດອນຂອງມັນ.

4 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດ ກ່ຽວກັບຕາ ແລະ ປີກ, ຊຶ່ງສັດເຫລົ່ານັ້ນມີ?

---

**77** 1 *ກ* ຄພ 130:6–9.
*ຂ* ຄພ 88:17–20, 25–26.
*ຄ* ຄມພ ແຜ່ນດິນໂລກ— ພາວະສຸດທ້າຍຂອງແຜ່ນດິນໂລກ; ລັດສະໝີພາບຂອງຊັ້ນສູງ.
2 *ກ* ຄມພ ສັນຍາລັກ.
*ຂ* ຄມພ ສະຫວັນ.
*ຄ* ຄມພ ທີ່ສຸຂະເສີມ.
*ງ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
*ຈ* ອທ 3:15–16; ອຣຣ 5:7–8. ຄມພ ວິນຍານ.
*ສ* ມຊ 3:19.
3 *ກ* ຄພ 93:30; ມຊ 3:9.
*ຂ* ຄພ 93:33–34.

ຄຳຕອບ. ຕາຂອງມັນເປັນຕົວແທນໃຫ້ແກ່ຄວາມສະຫວ່າງ ແລະ [ກ]ຄວາມຮູ້, ນັ້ນຄື ມັນເຕັມໄປດ້ວຍ ຄວາມຮູ້; ແລະ ປີກຂອງມັນເປັນຕົວແທນໃຫ້ແກ່ [ຂ]ພະລັງ, ທີ່ຈະເຄື່ອນໄຫວໄປມາ, ທີ່ຈະກະທຳ, ແລະ ອື່ນໆ.

5 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດກ່ຽວກັບ [ກ]ຜູ້ອາວຸໂສຊາວສີ່ຄົນທີ່ໂຢຮັນໄດ້ກ່າວເຖິງ?

ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າຜູ້ອາວຸໂສເຫລົ່ານີ້ທີ່ໂຢຮັນໄດ້ເຫັນ, ຄືຜູ້ອາວຸໂສທີ່ [ຂ]ຊື່ສັດໃນວຽກງານຂອງການປະຕິບັດສາດສະໜາກິດ ແລະ ໄດ້ເສຍຊີວິດໄປແລ້ວ; ຜູ້ເປັນຂອງໜ່ວຍຂອງສາດສະໜາຈັກ [ຄ]ເຈັດແຫ່ງ, ແລະ ໃນຂະນະນັ້ນໄດ້ຢູ່ໃນທີ່ສຸຂະເສີມຂອງພຣະເຈົ້າ.

6 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດກ່ຽວກັບໜັງສືທີ່ໂຢຮັນໄດ້ເຫັນ, ຊຶ່ງຂ້າງນອກມີ [ກ]ຕາປະທັບໄວ້ເຈັດດວງ?

ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າມັນບັນຈຸພຣະປະສົງ, [ຂ]ສິ່ງລີ້ລັບ, ແລະ ວຽກງານຂອງພຣະເຈົ້າທີ່ໄດ້ເປີດເຜີຍຢູ່ໃນນັ້ນ; ເລື່ອງທີ່ຊ້ອນຢູ່ຂອງການບໍລິຫານງານກ່ຽວກັບ [ຄ]ແຜ່ນດິນໂລກນີ້ລະຫວ່າງເຈັດພັນປີທີ່ໂລກດຳເນີນຕໍ່ໄປ, ຫລື ການເປັນຢູ່ທາງຝ່າຍໂລກຂອງມັນ.

7 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດກ່ຽວກັບຕາປະທັບເຈັດດວງທີ່ຖືກຜະນຶກໄວ້?

ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າ ຕາປະທັບດວງທຳອິດບັນຈຸເລື່ອງຂອງ [ກ]ພັນປີທຳອິດ, ແລະ ດວງທີສອງບັນຈຸເລື່ອງຂອງພັນປີທີສອງ, ແລະ ຕໍ່ໆໄປຈົນເຖິງດວງທີເຈັດ.

8 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດກ່ຽວກັບທູດສີ່ອົງ, ຊຶ່ງໄດ້ກ່າວເຖິງຢູ່ໃນບົດທີ 7 ຂໍ້ທີ 1 ຂອງພຣະທຳພຣະນິມິດ?

ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າ ທູດສີ່ອົງນັ້ນໄດ້ຖືກສົ່ງມາຈາກພຣະເຈົ້າ, ຜູ້ຊຶ່ງໄດ້ຮັບອຳນາດເໜືອສີ່ສ່ວນຂອງແຜ່ນດິນໂລກ, ເພື່ອຊ່ວຍຊີວິດ ແລະ ເພື່ອທຳລາຍ; ທູດເຫລົ່ານັ້ນເປັນຜູ້ທີ່ມີ [ກ]ພຣະກິດຕິຄຸນອັນເປັນນິດທີ່ຈະມອບໃຫ້ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ; ໂດຍມີອຳນາດທີ່ຈະປິດສະຫວັນ, ທີ່ຈະຜະນຶກສູ່ຊີວິດ, ຫລື ທີ່ຈະໂຍນລົງສູ່ [ຂ]ພາກພື້ນແຫ່ງຄວາມມືດ.

9 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງໃດກ່ຽວກັບທູດທີ່ປະກົດຂຶ້ນຈາກທິດຕາເວັນອອກ, ພຣະທຳພຣະນິມິດ ບົດທີ 7 ຂໍ້ທີ 2?

ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າ ທູດທີ່ປະກົດຂຶ້ນຈາກທິດຕາເວັນອອກຄືຜູ້ທີ່ໄດ້ຮັບຕາປະທັບຂອງພຣະເຈົ້າທີ່ຊົງພຣະຊົນໃຫ້ຢູ່ເໜືອສິບສອງເຜົ່າຂອງ [ກ]ອິດສະຣາເອນ; ດັ່ງນັ້ນ, ເພິ່ນຈຶ່ງຮ້ອງສຽງດັງໃສ່ທູດສີ່ອົງຜູ້ທີ່ມີພຣະກິດຕິຄຸນອັນເປັນນິດ, ກ່າວວ່າ: ຢ່າທຳລາຍແຜ່ນດິນໂລກ, ທັງທະເລ, ຫລື ຕົ້ນໄມ້, ຈົນກວ່າພວກເຮົາໄດ້ປະທັບຕາໃສ່ [ຂ]ໜ້າຜາກບັນດາຜູ້ຮັບໃຊ້ຂອງພຣະເຈົ້າເສຍກ່ອນ. ແລະ, ຖ້າຫາກທ່ານຈະຮັບເອົາມັນ, ນີ້ຄື [ຄ]ອີລາຍຜູ້

4 ກ ຄມພ ຄວາມຮູ້.
ຂ ຄມພ ອຳນາດ.
5 ກ ພນມ 4:4, 10.
ຂ ພນມ 14:4–5.
ຄ ພນມ 1:4.
6 ກ ພນມ 5:1.
ຂ ຄມພ ຄວາມລຶກລັບຂອງພຣະເຈົ້າ.
ຄ ຄມພ ແຜ່ນດິນໂລກ.
7 ກ ຄພ 88:108–110.
8 ກ ພນມ 14:6–7.
ຂ ມທ 8:11–12; 22:1–14; ຄພ 133:71–73.
9 ກ ພນມ 7:4–8.
ຂ ອຊກ 9:4.
ຄ ຄມພ ອີລາຍ.

ຊຶ່ງຈະມາເຕົ້າໂຮມເຜົ່າຕ່າງໆຂອງອິດສະ
ຣາເອນເຂົ້າກັນ ແລະ ງຟື້ນຟູທຸກສິ່ງທັງ
ປວງ.
10 ຄຳຖາມ. ເວລາໃດທີ່ເລື່ອງກ່າວເຖິງ
ໃນບົດນີ້ຈະສຳເລັດຄົບຖ້ວນ?
ຄຳຕອບ. ມັນ ຈະ ສຳເລັດຄົບ ຖ້ວນ ໃນ
ກພັນປີທີຫົກ, ຫລື ໃນການເລີ່ມຕົ້ນຂອງຕາ
ປະທັບດວງທີຫົກ.
11 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງ
ໃດກ່ຽວ ກັບ ກໜຶ່ງແສນສີ່ໝື່ນສີ່ພັນ ຄົນ
ທີ່ໄດ້ຮັບການປະທັບ ຕາ, ຈາກ ເຜົ່າຂອງ
ອິດສະຣາເອນທັງໝົດ—ໜຶ່ງໝື່ນສອງພັນ
ຄົນຈາກແຕ່ລະເຜົ່າ?
ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າ ຜູ້ຄົນ
ເຫລົ່ານັ້ນທີ່ຖືກປະທັບຕາເປັນ ຂມະຫາປະ
ໂລຫິດ, ໄດ້ຮັບການແຕ່ງຕັ້ງສູ່ລະບຽບອັນ
ສັກສິດຂອງພຣະເຈົ້າ, ເພື່ອປະຕິບັດພຣະ
ກິດຕິຄຸນອັນເປັນນິດ; ເພາະພວກເພິ່ນຄືຜູ້
ທີ່ໄດ້ຮັບການແຕ່ງຕັ້ງຈາກທຸກປະຊາຊາດ,
ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງ
ປວງ, ໂດຍເຫລົ່າທູດຜູ້ທີ່ໄດ້ຮັບມອບໝາຍ
ໃຫ້ມີອຳນາດເໜືອປະຊາຊາດຂອງແຜ່ນ
ດິນໂລກ, ເພື່ອນຳຜູ້ຄົນຢ່າງຫລວງຫລາຍ
ເທົ່າທີ່ຈະຫລາຍໄດ້ໃຫ້ມາສູ່ສາດສະໜາ
ຈັກຂອງ ຄພຣະບຸດຫົວປີ.
12 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງ
ໃດກ່ຽວກັບການເປົ່າ ກແກ, ຊຶ່ງກ່າວເຖິງໃນ
ບົດທີ 8 ຂອງພຣະທຳພຣະນິມິດ?
ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າ ດັ່ງ
ທີ່ພຣະເຈົ້າໄດ້ສ້າງໂລກໃນຫົກມື້, ແລະ
ໃນມື້ທີເຈັດ ພຣະອົງໄດ້ສຳເລັດວຽກງານ
ຂອງພຣະອົງ, ແລະ ໄດ້ ຂຊຳລະມັນໃຫ້
ບໍລິສຸດ, ແລະ ໄດ້ສ້າງມະນຸດຈາກ ຄຝຸ່ນ
ດິນຂອງແຜ່ນດິນໂລກສັນໃດ, ແມ່ນແຕ່
ສັນນັ້ນ, ໃນການເລີ່ມຕົ້ນຂອງພັນປີທີ
ເຈັດ ອົງພຣະຜູ້ເປັນເຈົ້າ ຈະ ງຊຳລະແຜ່ນ
ດິນໂລກໃຫ້ບໍລິສຸດ, ແລະ ເຮັດໃຫ້ຄວາມ
ລອດຂອງມະນຸດສົມບູນ, ແລະ ຈພິພາກ
ສາທຸກສິ່ງທັງປວງ, ແລະ ຈະ ສໄຖ່ທຸກສິ່ງ
ທັງປວງ, ຍົກເວັ້ນແຕ່ສິ່ງນັ້ນທີ່ພຣະອົງບໍ່
ໄດ້ວາງໄວ້ໃຕ້ອຳນາດຂອງພຣະອົງ, ເມື່ອ
ພຣະອົງຈະປະທັບຕາທຸກສິ່ງທັງປວງ, ຈົນ
ເຖິງທີ່ສຸດຂອງທຸກສິ່ງທັງປວງ; ແລະ ການ
ເປົ່າແກຂອງທູດເຈັດອົງເປັນການຕຽມ
ແລະ ການສຳເລັດວຽກງານຂອງພຣະອົງ,
ໃນການເລີ່ມຕົ້ນຂອງພັນປີທີເຈັດ—ການ
ຕຽມທາງກ່ອນເວລາແຫ່ງການສະເດັດມາ
ຂອງພຣະອົງ.
13 ຄຳຖາມ. ເມື່ອໃດທຸກສິ່ງທັງປວງຈະ
ສຳເລັດຄົບຖ້ວນ, ຊຶ່ງມີຂຽນໄວ້ໃນບົດທີ 9
ຂອງພຣະທຳພຣະນິມິດ?
ຄຳຕອບ. ມັນຈະສຳເລັດຄົບຖ້ວນຫລັງ
ຈາກການເປີດຕາປະທັບດວງທີເຈັດ, ກ່ອນ
ການສະເດັດມາຂອງພຣະຄຣິດ.
14 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງ
ໃດກ່ຽວກັບໜັງສືມ້ວນນ້ອຍນັ້ນ ຊຶ່ງໂຢຮັນ
ໄດ້ ກກິນ, ດັ່ງທີ່ໄດ້ກ່າວເຖິງໃນບົດທີ 10
ຂອງພຣະທຳພຣະນິມິດ?
ຄຳຕອບ. ພວກເຮົາຄວນເຂົ້າໃຈວ່າ ມັນຄື
ພາລະກິດ, ແລະ ພິທີການ, ສຳລັບເພິ່ນທີ່

9 *ງ* ຄມພ ການຟື້ນຟູ ພຣະກິດຕິຄຸນ.
10 *ກ* ພນມ 6:12–17.
11 *ກ* ພນມ 14:3–5.
*ຂ* ຄມພ ມະຫາປະໂລຫິດ.
*ຄ* ຄພ 76:51–70. ຄມພ ລູກກົກ.
12 *ກ* ພນມ 8:2.
*ຂ* ປຖກ 2:1–3; ອພຍ 20:11; 31:12–17; ມຊຢ 13:16–19; ມຊ 3:1–3; ອຮຣ 5:1–3.
*ຄ* ປຖກ 2:7.
*ງ* ຄພ 88:17–20.
*ຈ* ຄມພ ພຣະເຢຊູ ຄຣິດ—ພິພາກສາ.
*ສ* ຄມພ ໄຖ່, ການໄຖ່, ຖືກໄຖ່.
14 *ກ* ອຊກ 2:9–10; 3:1–4; ພນມ 10:10.

ຈະ ^ຂ^ເຕົ້າໂຮມເຜົ່າຂອງອິດສະຣາເອນ; ຈົ່ງ
ເບິ່ງ, ນີ້ຄືອີລາຍຜູ້ຊຶ່ງ, ດັ່ງທີ່ມີຂຽນໄວ້ວ່າຈະ
ຕ້ອງມາ ແລະ ຈະ ^ຄ^ຟື້ນຟູທຸກສິ່ງທັງປວງ.

15 ຄຳຖາມ. ພວກເຮົາຄວນເຂົ້າໃຈຢ່າງ
ໃດກ່ຽວກັບ ^ກ^ພະຍານທັງສອງ, ໃນບົດທີ
ສິບເອັດຂອງພຣະທຳພຣະນິມິດ?

ຄຳຕອບ. ພວກເພິ່ນຄືສາດສະດາສອງ
ທ່ານທີ່ຖືກຍົກຂຶ້ນໃຫ້ ^ຂ^ປະຊາຊາດຊາວ
ຢິວໃນ ^ຄ^ຍຸກສຸດທ້າຍ, ໃນວັນເວລາແຫ່ງ
^ງ^ການຟື້ນຟູ, ແລະ ເພື່ອພະຍາກອນຕໍ່ຊາວ
ຢິວຫລັງຈາກພວກເຂົາໄດ້ເຕົ້າໂຮມກັນ
ແລະ ໄດ້ສ້າງເມືອງເຢຣູຊາເລັມໃນ ^ຈ^ແຜ່ນ
ດິນບັນພະບຸລຸດຂອງພວກເຂົາ.

## ພາກທີ 78

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 1 ເດືອນມີນາ, 1832. ໃນມື້ນັ້ນ, ສາດສະດາ ແລະ ຜູ້ນຳຄົນອື່ນໆ ໄດ້ເຕົ້າໂຮມກັນ ເພື່ອສົນທະນາກ່ຽວກັບທຸລະກິດຂອງສາດສະໜາຈັກ. ສາເຫດຕົ້ນເດີມຂອງການເປີດເຜີຍນີ້ ແມ່ນເພື່ອແນະນຳສາດສະດາ, ຊິດນີ ຣິກດອນ, ແລະ ນິວເອັນ ເຄ ວິດນີ ໃຫ້ເດີນທາງໄປຫາລັດມີເຊີຣີ ແລະ ສ້າງຕັ້ງຮ້ານຄ້າ ແລະ ໂຮງພິມຂອງສາດສະໜາຈັກຂຶ້ນ ໂດຍການສ້າງ "ກຸ່ມທຸລະກິດ" ເພື່ອບໍລິຫານພາລະກິດເຫລົ່ານີ້, ເພື່ອຫາທຶນມາເສີມສ້າງຊີໂອນ ແລະ ເພື່ອຜົນປະໂຫຍດຂອງຄົນຍາກຈົນ. ກຸ່ມທຸລະກິດນີ້ເປັນທີ່ຮູ້ຈັກກັນວ່າກຸ່ມທຸລະກິດເອກະພາບ, ໄດ້ຖືກຈັດຕັ້ງຂຶ້ນໃນເດືອນເມສາ 1832 ແລະ ໄດ້ລົ້ມເລີກໄປໃນປີ 1834 (ເບິ່ງ ພາກທີ 82). ບໍ່ດົນຫລັງຈາກການລົ້ມເລີກນັ້ນ, ພາຍໃຕ້ການຊີ້ນຳຂອງໂຈເຊັບ ສະມິດ, ສຳນວນທີ່ວ່າ "ຄັງພາລະກິດສຳລັບຄົນຍາກຈົນ" ໄດ້ຖືກໃຊ້ແທນ "ຮ້ານຄ້າ ແລະ ໂຮງພິມ" ໃນການເປີດເຜີຍ, ແລະ ຄຳທີ່ວ່າ "ລະບົບ" ໄດ້ຖືກໃຊ້ແທນຄຳວ່າ "ກຸ່ມທຸລະກິດ."*

*1–4, ໄພ່ພົນຂອງພຣະເຈົ້າຄວນຈັດຕັ້ງ ແລະ ສະຖາປະນາຄັງຂຶ້ນ; 5–12, ການໃຊ້ຊັບສິນຂອງພວກເຂົາຢ່າງສະຫລາດຈະນຳໄປສູ່ຄວາມລອດ; 13–14, ສາດສະໜາຈັກຄວນເປັນອິດສະລະຈາກອຳນາດຂອງແຜ່ນດິນໂລກ; 15–16, ມີຄາເອນ (ອາດາມ) ຮັບໃຊ້ພາຍໃຕ້ການຊີ້ນຳຂອງພຣະຜູ້ບໍລິສຸດ (ພຣະຄຣິດ); 17–22, ຄົນທີ່ຊື່ສັດເປັນສຸກແລ້ວ, ເພາະພວກເຂົາຈະໄດ້ຮັບທຸກສິ່ງທັງປວງເປັນມູນມໍລະດົກ.*

1 ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວ ກັບ ໂຈເຊັບ
ສະມິດ, ຜູ້ລູກ, ໂດຍກ່າວວ່າ: ຈົ່ງເຊື່ອຟັງ
ເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງເຈົ້າໄດ້ກ່າວ, ຜູ້ໄດ້ຮັບການແຕ່ງຕັ້ງສູ່
^ກ^ຖານະປະໂລຫິດສູງແຫ່ງສາດສະໜາຈັກ
ຂອງເຮົາ, ຜູ້ໄດ້ມາຮ່ວມຊຸມນຸມກັນ;

14 *ຂ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຄ* ມທ 17:11.
15 *ກ* ພນມ 11:1–14.
*ຂ* ຄມພ ຊາວຢິວ.
*ຄ* ຄມພ ຍຸກສຸດທ້າຍ.
*ງ* ຄມພ ການຟື້ນຟູພຣະກິດຕິຄຸນ.
*ຈ* ອມ 9:14–15.
78 1 *ກ* ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.

2 ແລະ ຟັງ [ກ]ຄຳແນະນຳຂອງພຣະອົງຜູ້ໄດ້ [ຂ]ແຕ່ງຕັ້ງເຈົ້າຈາກເບື້ອງບົນ, ຜູ້ຈະກ່າວຄຳແຫ່ງປັນຍາໃສ່ຫູຂອງເຈົ້າ, ເພື່ອຄວາມລອດຈະເກີດກັບເຈົ້າໃນສິ່ງນັ້ນຊຶ່ງເຈົ້າໄດ້ສະເໜີຕໍ່ເຮົາ, ອົງພຣະຜູ້ເປັນເຈົ້າໄດ້ກ່າວ.

3 ເພາະຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ, ເວລາໄດ້ມາເຖິງແລ້ວ, ແລະ ບັດນີ້ຢູ່ພຽງແຄ່ເອື້ອມ; ແລະ ຈົ່ງເບິ່ງ, ແລະ ເບິ່ງແມ, ຈຳເປັນທີ່ຈະຕ້ອງ [ກ]ຈັດລະບຽບຜູ້ຄົນຂອງເຮົາ, ໃນການດູແລ ແລະ ການຈັດຕັ້ງວຽກງານໃນ [ຂ]ຄັງສຳລັບ [ຄ]ຄົນຍາກຈົນຂອງຜູ້ຄົນຂອງເຮົາ, ທັງໃນສະຖານທີ່ນີ້ ແລະ ໃນແຜ່ນດິນ [ງ]ຊີໂອນ—

4 ເພື່ອຈະມີການຈັດຕັ້ງ ແລະ ລະບົບອັນເປັນນິດ ແລະ ຖາວອນສຳລັບສາດສະໜາຈັກຂອງເຮົາ, ເພື່ອໃຫ້ອຸດົມການກ້າວໄປໜ້າ, ຊຶ່ງເຈົ້າໄດ້ສະໜັບສະໜູນ, ເພື່ອຄວາມລອດຂອງມະນຸດ, ແລະ ເພື່ອລັດສະໝີພາບຂອງພຣະບິດາຂອງເຈົ້າຜູ້ສະຖິດຢູ່ໃນສະຫວັນ;

5 ເພື່ອວ່າເຈົ້າຈະ [ກ]ເທົ່າທຽມກັນໃນພັນທະການຂອງເລື່ອງແຫ່ງສະຫວັນ, ແທ້ຈິງແລ້ວ, ແລະ ເລື່ອງແຫ່ງແຜ່ນດິນໂລກນຳອີກ, ເພື່ອຈະໄດ້ຮັບເລື່ອງແຫ່ງສະຫວັນ.

6 ເພາະຖ້າຫາກເຈົ້າບໍ່ເທົ່າທຽມກັນໃນເລື່ອງແຫ່ງແຜ່ນດິນໂລກ ແລ້ວເຈົ້າຈະເທົ່າທຽມກັນໃນເລື່ອງແຫ່ງສະຫວັນບໍ່ໄດ້;

7 ເພາະຖ້າຫາກເຈົ້າຢາກໃຫ້ເຮົາປະທານສະຖານທີ່ໃນໂລກ [ກ]ຊັ້ນສູງໃຫ້ເຈົ້າ, ແລ້ວເຈົ້າຕ້ອງ [ຂ]ຕຽມຕົວເອງ ໂດຍ [ຄ]ການເຮັດສິ່ງທີ່ເຮົາໄດ້ບັນຊາເຈົ້າ ແລະ ຮຽກຮ້ອງຈາກເຈົ້າ.

8 ແລະ ບັດນີ້, ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ມັນຈຳເປັນທີ່ທຸກສິ່ງທັງປວງຖືກກະທຳໄປເພື່ອ [ກ]ລັດສະໝີພາບຂອງເຮົາ, ໂດຍພວກເຈົ້າຜູ້ມາຮວມກັນຢູ່ໃນ [ຂ]ລະບົບນີ້;

9 ຫລື, ອີກຄຳໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງເຮົານິວເອັນ ເຄ ວິດນີ ແລະ ຜູ້ຮັບໃຊ້ຂອງເຮົາໂຈເຊັບ ສະມິດ, ຜູ້ລູກ, ແລະ ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ ນັ່ງຢູ່ໃນສະພາກັບໄພ່ພົນຂອງພຣະເຈົ້າ ຊຶ່ງຢູ່ໃນຊີໂອນ;

10 ຖ້າບໍ່ດັ່ງນັ້ນ [ກ]ຊາຕານຈະພະຍາຍາມຫັນຫົວໃຈຂອງພວກເຂົາໄປຈາກຄວາມຈິງ, ຈົນວ່າພວກເຂົາກາຍເປັນຄົນຕາບອດ ແລະ ບໍ່ເຂົ້າໃຈສິ່ງທີ່ໄດ້ຕຽມໄວ້ສຳລັບພວກເຂົາ.

11 ດັ່ງນັ້ນ, ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່ເຈົ້າ, ເພື່ອຕຽມ ແລະ ວາງລະບຽບຕົນເອງໂດຍພັນທະ ຫລື [ກ]ພັນທະສັນຍາອັນເປັນນິດທີ່ຝ່າຝືນບໍ່ໄດ້.

12 ແລະ ຄົນໃດທີ່ຝ່າຝືນສິ່ງນີ້ຈະສູນເສຍໜ້າທີ່ ແລະ ຕຳແໜ່ງຂອງຕົນໃນສາດສະໜາຈັກ, ແລະ ຈະຖືກສົ່ງໄປຮັບເອົາ [ກ]ຄວາມທຸກທໍລະມານຂອງຊາຕານຈົນເຖິງວັນແຫ່ງການໄຖ່.

13 ຈົ່ງເບິ່ງ, ນີ້ເປັນການຕຽມ ດ້ວຍເຫດນີ້ເຮົາຈຶ່ງໄດ້ຕຽມເຈົ້າ, ແລະ ຮາກຖານ, ແລະ ແບບຢ່າງ ຊຶ່ງເຮົາໄດ້ມອບໃຫ້ແກ່ເຈົ້າ, ຊຶ່ງໂດຍການນີ້ເຈົ້າຈະເຮັດໃຫ້ບັນຍັດ ຊຶ່ງໄດ້ມອບໃຫ້ແກ່ເຈົ້າບັນລຸຜົນສຳເລັດ;

---

2 *ກ* ຄມພ ຄຳແນະນຳ.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
3 *ກ* ຄພ 82:11–12, 15–21.
*ຂ* ຄພ 72:9–10; 83:5–6.
*ຄ* ຄພ 42:30–31. ຄມພ ຄວາມຜາສຸກ.
*ງ* ຄພ 57:1–2.
5 *ກ* ຄພ 49:20. ຄມພ ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.
7 *ກ* ຄມພ ລັດສະໝີພາບຂອງຊັ້ນສູງ.
*ຂ* ຄພ 29:8; 132:3.
*ຄ* ຄພ 82:10.
8 *ກ* ມຊ 1:39.
*ຂ* ຄພ 92:1.
10 *ກ* ຄມພ ມານ.
11 *ກ* ຄມພ ພັນທະສັນຍາ.
12 *ກ* 1 ກຣທ 5:5; ຄພ 82:21; 104:8–10.

14 ເພື່ອ ວ່າ ຜ່ານ ການ ອາ ລັກ ຂາ ຂອງ ເຮົາ, ເຖິງ ແມ່ນ [ກ]ຄວາມ ທຸກຍາກລຳບາກ ຊຶ່ງຈະມາເຖິງເຈົ້າ, ເພື່ອວ່າສາດສະໜາ ຈັກຈະຕັ້ງຢູ່ຢ່າງເປັນອິດສະລະເໜືອຊາວ ໂລກທັງປວງພາຍໃຕ້ໂລກຊັ້ນສູງ;

15 ເພື່ອວ່າເຈົ້າຈະໄດ້ຂຶ້ນມາຫາ [ກ]ມົງກຸດ ທີ່ໄດ້ຕຽມໄວ້ສຳລັບເຈົ້າ, ແລະ ຖືກເຮັດໃຫ້ ເປັນ [ຂ]ຜູ້ປົກຄອງເໜືອ ອານາຈັກຫລາຍ ແຫ່ງ, ອົງພຣະຜູ້ເປັນເຈົ້າໄດ້ກ່າວ, ພຣະ ຜູ້ສັກສິດຂອງຊີໂອນ, ຜູ້ໄດ້ວາງຮາກຖານ ຂອງ [ຄ]ອາດາມ-ອອນໄດ-ອາມັນ;

16 ຜູ້ໄດ້ແຕ່ງຕັ້ງ [ກ]ມີຄາເອນໃຫ້ເປັນເຈົ້າ ຊາຍຂອງເຈົ້າ, ແລະ ສະຖາປະນາຕີນຂອງ ລາວໄວ້, ແລະ ວາງລາວໄວ້ຢູ່ບ່ອນສູງ, ແລະ ມອບຂໍກະແຈແຫ່ງຄວາມລອດ ໃຫ້ ລາວ ພາຍໃຕ້ການແນະນຳ ແລະ ການຊີ້ນຳ ຂອງພຣະຜູ້ບໍລິສຸດ, ຜູ້ປາດສະຈາກການ ເລີ່ມຕົ້ນຂອງມື້ ຫລື ການສິ້ນສຸດຂອງຊີວິດ.

17 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ ເຈົ້າ, ເຈົ້າເປັນເດັກນ້ອຍໆ, ແລະ ເຈົ້າຍັງບໍ່ ເຂົ້າໃຈພອນອັນຍິ່ງໃຫຍ່ທີ່ພຣະບິດາມີໃນ ພຣະຫັດຂອງພຣະອົງ ແລະ ຕຽມໄວ້ໃຫ້ ເຈົ້າເທື່ອ;

18 ແລະ ເຈົ້າບໍ່ສາມາດ [ກ]ທົນກັບທຸກສິ່ງ ທັງປວງໄດ້ໃນຕອນນີ້; ເຖິງຢ່າງໃດກໍຕາມ, ຈົ່ງເບີກບານເຖີດ, ເພາະເຮົາຈະ [ຂ]ນຳພາ ເຈົ້າໄປ. ອານາຈັກເປັນຂອງເຈົ້າ ແລະ ພອນໃນນັ້ນເປັນຂອງເຈົ້າ, ແລະ ຄວາມຮັ່ງ ມີແຫ່ງ [ຄ]ຊົ່ວນິລັນດອນກໍເປັນຂອງເຈົ້າ.

19 ແລະ ຄົນທີ່ຮັບເອົາທຸກສິ່ງທັງປວງ ດ້ວຍ [ກ]ຄວາມຂອບຄຸນຈະຖືກເຮັດໃຫ້ຮຸ່ງ ເຫລື້ອມ; ແລະ ສິ່ງຂອງ ຂອງແຜ່ນດິນໂລກ ຈະຖືກຕື່ມໃຫ້ເຂົາ, ແມ່ນແຕ່ [ຂ]ຮ້ອຍເທົ່າ, ແທ້ຈິງແລ້ວ, ຫລາຍກວ່ານັ້ນ.

20 ດັ່ງນັ້ນ, ຈົ່ງເຮັດສິ່ງທີ່ເຮົາໄດ້ບັນຊາ ເຈົ້າ, ພຣະຜູ້ໄຖ່ຂອງເຈົ້າກ່າວ, ແມ່ນແຕ່ ພຣະບຸດ [ກ]ອາມັນ, ຜູ້ໄດ້ຕຽມທຸກສິ່ງທັງ ປວງກ່ອນພຣະອົງຈະ [ຂ]ຮັບເອົາເຈົ້າໄປ;

21 ເພາະເຈົ້າເປັນ [ກ]ສາດສະໜາຈັກຂອງ ພຣະບຸດຫົວປີ, ແລະ ພຣະອົງຈະ [ຂ]ຮັບເອົາ ເຈົ້າຂຶ້ນໄປໃນເມກ, ແລະ ກຳນົດສ່ວນທີ່ ເປັນຂອງເຂົາໃຫ້ແຕ່ລະຄົນ.

22 ແລະ [ກ]ຜູ້ພິທັກຮັກສາທີ່ຊື່ສັດ ແລະ [ຂ]ສະຫລາດຈະໄດ້ຮັບ [ຄ]ທຸກສິ່ງທັງປວງເປັນ ມູນມໍລະດົກ. ອາແມນ.

# ພາກທີ 79

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 12 ເດືອນມີນາ, 1832.*

14 *ກ* ຄພ 58:2–4.
15 *ກ* ຄມພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
*ຂ* ພນມ 5:10; ຄພ 76:56–60; 132:19.
*ຄ* ຄມພ ອາດາມ-ອອນໄດ-ອາມັນ.
16 *ກ* ຄພ 27:11; 107:54–55. ຄມພ ອາດາມ.
18 *ກ* ຢຮ 16:12; 3 ນຟ 17:2–3; ຄພ 50:40.
*ຂ* ຄພ 112:10.
*ຄ* ຄມພ ຊີວິດນິລັນດອນ.
19 *ກ* ມຊຢ 2:20–21. ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
*ຂ* ມທ 19:29.
20 *ກ* ຄພ 95:17.
*ຂ* 1 ທສນ 4:17.
21 *ກ* ຄພ 76:53–54.
*ຂ* ຄພ 88:96–98.
22 *ກ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
*ຂ* ຄພ 72:3–4.
*ຄ* ຄພ 84:38.

*1–4, ແຈເຣັດ ຄາດເທີ ຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນໂດຍພຣະຜູ້ປອບໂຍນ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ມັນເປັນຄວາມປະສົງຂອງເຮົາທີ່ຜູ້ຮັບໃຊ້ຂອງເຮົາ ແຈເຣັດ ຄາດເທີ ຄວນໄປຫາດິນແດນພາກຕາເວັນອອກອີກ, ຈາກບ່ອນໜຶ່ງຫາອີກບ່ອນໜຶ່ງ, ແລະ ຈາກເມືອງໜຶ່ງຫາອີກເມືອງໜຶ່ງ, ໃນອຳນາດຂອງການແຕ່ງຕັ້ງ ຊຶ່ງດ້ວຍອຳນາດນັ້ນລາວໄດ້ຮັບ [ກ]ການແຕ່ງຕັ້ງ, ແລະ ປະກາດຂ່າວອັນໜ້າຊື່ນຊົມທີ່ຍິ່ງໃຫຍ່, ແມ່ນແຕ່ພຣະກິດຕິຄຸນອັນເປັນນິດ.

2 ແລະ ເຮົາຈະສົ່ງ [ກ]ພຣະຜູ້ປອບໂຍນໄປໃຫ້ລາວ, ຊຶ່ງຈະສິດສອນລາວເຖິງຄວາມຈິງ ແລະ ເສັ້ນທາງທີ່ລາວຈະໄປ;

3 ແລະ ຕາບໃດທີ່ລາວຍັງຊື່ສັດ, ເຮົາຈະສວມມົງກຸດລາວອີກດ້ວຍມັດເຂົ້າ.

4 ດັ່ງນັ້ນ, ຈົ່ງຊື່ນຊົມໃນໃຈ, ຜູ້ຮັບໃຊ້ຂອງເຮົາ ແຈເຣັດ ຄາດເທີ, ແລະ [ກ]ຢ່າສູ່ຢ້ານ, ພຣະຜູ້ເປັນເຈົ້າຂອງເຈົ້າກ່າວ, ແມ່ນແຕ່ພຣະເຢຊູຄຣິດ. ອາແມນ.

# ພາກທີ 80

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ໃຫ້ແກ່ສະຕີບເວັນ ເບີແນັດ, ທີ່ເມືອງໄຮຣາ, ລັດໂອໄຮໂອ, ວັນທີ 7 ເດືອນມີນາ, 1832.*

*1–5, ສະຕີບເວັນ ເບີແນັດ ແລະ ອີເດັນ ສະມິດ ໄດ້ຖືກເອີ້ນໃຫ້ສັ່ງສອນໃນບ່ອນໃດກໍຕາມທີ່ເຂົາເຈົ້າເລືອກ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບເຈົ້າ ຜູ້ຮັບໃຊ້ຂອງເຮົາ ສະຕີບເວັນ ເບີແນັດ: ເຈົ້າຈົ່ງອອກໄປ, ເຈົ້າຈົ່ງອອກໄປໃນໂລກ ແລະ [ກ]ສັ່ງສອນພຣະກິດຕິຄຸນໃຫ້ແກ່ມະນຸດສະໂລກທັງໝົດທີ່ໄດ້ຍິນສຽງຂອງເຈົ້າ.

2 ແລະ ຕາບໃດທີ່ເຈົ້າຍັງປາດຖະໜາເພື່ອນຮ່ວມງານ, ເຮົາຈະມອບຜູ້ຮັບໃຊ້ຂອງເຮົາ ອີເດັນ ສະມິດ ໃຫ້ເຈົ້າ.

3 ດັ່ງນັ້ນ, ເຈົ້າຈົ່ງອອກໄປ ແລະ ສັ່ງສອນພຣະກິດຕິຄຸນຂອງເຮົາ, ບໍ່ວ່າຈະໄປເໜືອ ຫລື ໃຕ້, ໄປພາກຕາເວັນອອກ ຫລື ຕາເວັນຕົກ, ມັນບໍ່ສຳຄັນ, ເພາະເຈົ້າບໍ່ສາມາດໄປຜິດທາງ.

4 ສະນັ້ນ, ຈົ່ງປະກາດສິ່ງທີ່ເຈົ້າໄດ້ຍິນ, ແລະ ເຊື່ອຢ່າງແທ້ຈິງ, ແລະ [ກ]ຮູ້ວ່າເປັນຄວາມຈິງ.

5 ຈົ່ງເບິ່ງ, ນີ້ຄືພຣະປະສົງຂອງພຣະອົງຜູ້ໄດ້ [ກ]ເອີ້ນເຈົ້າ, ພຣະຜູ້ໄຖ່ຂອງເຈົ້າ, ແມ່ນແຕ່ພຣະເຢຊູຄຣິດ. ອາແມນ.

---

**79** 1*ກ* ຄພ 52:38.
ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
2*ກ* ຢຣ 14:26.
ຄມພ ພຣະຜູ້ປອບໂຍນ.
4*ກ* ຄພ 68:5–6.
**80** 1*ກ* ມຣກ 16:15.
4*ກ* ຄມພ ປະຈັກພະຍານ.
5*ກ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.

# ພາກທີ 81

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣຳ, ລັດໂອໄຮໂອ, ວັນທີ 15 ເດືອນມີນາ, 1832. ເຟຣ໌ເດຣິກ ຈີ ວິວລຽມສ໌ ຖືກເອີ້ນໃຫ້ເປັນມະຫາປະໂລຫິດ ແລະ ທີ່ປຶກສາໃນຝ່າຍປະທານຂອງຖານະປະໂລຫິດສູງ. ບັນທຶກປະຫວັດສາດນີ້ສະແດງໃຫ້ເຫັນວ່າ ເມື່ອໄດ້ຮັບການເປີດເຜີຍນີ້ໃນເດືອນມີນາ 1832, ແຈຊີ ກຳສ໌ ໄດ້ຖືກເອີ້ນສືບຕໍ່ຕຳແໜ່ງເປັນທີ່ປຶກສາຂອງ ໂຈເຊັບ ສະມິດ ໃນຝ່າຍປະທານ. ເຖິງຢ່າງໃດກໍຕາມ, ເມື່ອ ລາວບໍ່ສາມາດປະຕິບັດໜ້າທີ່ຢ່າງສະໝ່ຳສະເໝີ, ການເອີ້ນນັ້ນຈຶ່ງຖືກໂອນໃຫ້ ເຟຣ໌ເດຣິກ ຈີ ວິວລຽມສ໌ ຮັບເອົາຕໍ່. ການເປີດເຜີຍ (ໃນເດືອນມີນາ 1832) ຄວນຖືວ່າເປັນບາດກ້າວໜຶ່ງໄປສູ່ການຈັດຕັ້ງຂອງຝ່າຍປະທານສູງສຸດ ຢ່າງເປັນທາງການ, ຊຶ່ງເນັ້ນເຖິງການເອີ້ນສະເພາະສຳລັບຕຳແໜ່ງທີ່ປຶກສາໃນກຸ່ມນັ້ນ ແລະ ອະທິບາຍເຖິງກຽດສັກສີຂອງວຽກງານມອບໝາຍ. ບຣະເດີ ກຳສ໌ ໄດ້ຮັບໃຊ້ຊົ່ວໄລຍະໜຶ່ງ, ແຕ່ໄດ້ຖືກຕັດອອກຈາກສາດສະໜາຈັກໃນເດືອນທັນວາ ປີ 1832. ບຣະເດີ ວິວລຽມສ໌ ໄດ້ຮັບການແຕ່ງຕັ້ງສູ່ຕຳແໜ່ງທີ່ກ່າວມານັ້ນ ໃນວັນທີ 18 ເດືອນມີນາ, 1833.*

*1–2, ຝ່າຍປະທານສູງສຸດເປັນຜູ້ຖືຂໍກະແຈຂອງອານາຈັກສະເໝີໄປ; 3–7, ຖ້າຫາກ ເຟຣ໌ເດຣິກ ຈີ ວິວລຽມສ໌ ຊື່ສັດໃນການປະຕິບັດສາດສະໜາກິດຂອງລາວ, ແລ້ວລາວຈະມີຊີວິດນິລັນດອນ.*

1 ຕາມ ຈິງ, ຕາມ ຈິງ ແລ້ວ, ເຮົາ ກ່າວ ກັບ ເຈົ້າ ຜູ້ຮັບໃຊ້ຂອງເຮົາ ເຟຣ໌ເດຣິກ ຈີ ວິວລຽມສ໌: ຈົ່ງຟັງສຸລະສຽງຂອງພຣະອົງຜູ້ທີ່ກ່າວ, ຟັງພຣະຄຳຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ແລະ ຈົ່ງເຊື່ອຟັງຕໍ່ການເອີ້ນຊຶ່ງເຈົ້າຖືກມອບໝາຍໃຫ້ເຮັດ, ແມ່ນແຕ່ໃຫ້ເປັນ [ກ]ມະຫາປະໂລຫິດໃນສາດສະໜາຈັກຂອງເຮົາ, ແລະ ເປັນທີ່ປຶກສາແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ;

2 ຜູ້ຊຶ່ງເຮົາໄດ້ມອບ [ກ]ຂໍກະແຈຂອງອານາຈັກໃຫ້, ຊຶ່ງເປັນຂອງ [ຂ]ຝ່າຍປະທານຂອງຖານະປະໂລຫິດສູງສະເໝີໄປ:

3 ສະນັ້ນ, ຕາມຄວາມຈິງແລ້ວ ເຮົາຈະຮັບຮູ້ລາວ ແລະ ຈະອວຍພອນລາວ, ແລະ ເຈົ້ານຳອີກ, ຕາບໃດທີ່ເຈົ້າຍັງຊື່ສັດໃນການປຶກສາ, ໃນຕຳແໜ່ງຊຶ່ງເຮົາໄດ້ກຳນົດໃຫ້ແກ່ເຈົ້າ, ໃນການອະທິຖານສະເໝີໄປ, ໂດຍອອກສຽງ ແລະ ໃນໃຈຂອງເຈົ້າ, ໃນສາທາລະນະ ແລະ ໃນບ່ອນເປັນສ່ວນຕົວ, ທັງໃນການປະຕິບັດສາດສະໜາກິດຂອງເຈົ້ານຳອີກ ໃນການປະກາດພຣະກິດຕິຄຸນໃນແຜ່ນດິນຂອງຄົນເປັນ, ແລະ ໃນບັນດາພີ່ນ້ອງຂອງເຈົ້າ.

4 ແລະ ໃນການເຮັດສິ່ງເຫລົ່ານີ້ ເຈົ້າຈະເຮັດຄວາມດີອັນຍິ່ງໃຫຍ່ທີ່ສຸດແກ່ເພື່ອນມະນຸດຂອງເຈົ້າ, ແລະ ຈະສົ່ງເສີມ [ກ]ລັດສະໝີພາບຂອງພຣະອົງ ຜູ້ຊຶ່ງເປັນພຣະຜູ້ເປັນເຈົ້າຂອງເຈົ້າ.

5 ດັ່ງນັ້ນ, ຈົ່ງຊື່ສັດ; ຈົ່ງຍຶດໝັ້ນໃນຕຳ

**81** 1*ກ* ຄມພ ມະຫາປະໂລຫິດ.
2*ກ* ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຂ* ຄພ 107:8–9, 22.
ຄມພ ຝ່າຍປະທານສູງສຸດ.
4*ກ* ມຊ 1:39.

ແໜ່ງຊຶ່ງເຮົາໄດ້ກຳນົດໃຫ້ເຈົ້າ; ຈົ່ງ [ກ]ຊ່ວຍ
ເຫລືອຄົນທີ່ອ່ອນແອ, ຍົກມືທີ່ເມື່ອຍລ້າ,
ແລະ [ຂ]ໃຫ້ກຳລັງ [ຄ]ຫົວເຂົ່າທີ່ອ່ອນເພຍ.
6 ແລະ ຖ້າຫາກເຈົ້າຊື່ສັດຈົນເຖິງທີ່ສຸດ,
ແລ້ວເຈົ້າຈະໄດ້ຮັບມົງກຸດແຫ່ງ [ກ]ຄວາມ
ເປັນອະມະຕະ, ແລະ [ຂ]ຊີວິດນິລັນດອນໃນ
[ຄ]ຜາສາດ ຊຶ່ງເຮົາໄດ້ຕຽມໄວ້ໃນບ້ານຂອງ
ພຣະບິດາຂອງເຮົາ.
7 ຈົ່ງເບິ່ງ, ແລະ ເບິ່ງແມ, ນີ້ຄືຖ້ອຍຄຳ
ຂອງອາລະຟາ ແລະ ໂອເມຄາ, ແມ່ນແຕ່
ພຣະເຢຊູຄຣິດ. ອາແມນ.

## ພາກທີ 82

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນເມືອງອິນດີເພັນເດັນສ໌, ເຂດແຈ໊ກສັນ, ລັດມີເຊີຣີ, ວັນທີ 26 ເດືອນເມສາ, 1832. ເຫດການນັ້ນໄດ້ເກີດຂຶ້ນຢູ່ໃນການປະຊຸມສະພາມະຫາປະໂລຫິດ ແລະ ພວກແອວເດີຂອງສາດສະໜາຈັກ. ໃນການປະຊຸມສະພາດັ່ງກ່າວ, ໂຈເຊັບ ສະມິດ ໄດ້ຖືກແຕ່ງຕັ້ງໃຫ້ເປັນປະທານຂອງຖານະປະໂລຫິດສູງ, ເປັນຕຳແໜ່ງທີ່ເພິ່ນໄດ້ຮັບການແຕ່ງຕັ້ງມາແລ້ວໃນກອງປະຊຸມໃຫຍ່ຂອງມະຫາປະໂລຫິດ, ພວກແອວເດີ, ແລະ ສະມາຊິກ, ທີ່ເມືອງອາມເຮີດ, ລັດໂອໄຮໂອ, ວັນທີ 25 ເດືອນມັງກອນ, 1832 (ເບິ່ງ ຫົວຂໍ້ຂອງ ພາກທີ 75). ການເປີດເຜີຍນີ້ ກ່າວເນັ້ນຄຳແນະນຳທີ່ໄດ້ມອບໃຫ້ ໃນການເປີດເຜີຍທີ່ຜ່ານມາ (ພາກທີ 78) ເພື່ອໃຫ້ຈັດຕັ້ງ ກຸ່ມທຸລະກິດຂຶ້ນ—ຊຶ່ງຮູ້ຈັກກັນວ່າ ກຸ່ມທຸລະກິດເອກະພາບ (ພາຍໃຕ້ການຊີ້ນຳຂອງໂຈເຊັບ ສະມິດ, ຄຳວ່າ "ລະບົບ" ໄດ້ຖືກໃຊ້ແທນຄຳວ່າ "ກຸ່ມທຸລະກິດ")—ເພື່ອປົກຄອງພາລະກິດການຄ້າ ແລະ ໂຮງພິມຂອງສາດສະໜາຈັກ.*

*1–4, ເມື່ອໃດກໍຕາມທີ່ປະທານໃຫ້ຫລາຍ, ເມື່ອນັ້ນກໍຮຽກຮ້ອງຫລາຍ; 5–7, ຄວາມມືດມົວຄອບງຳໂລກ; 8–13, ພຣະຜູ້ເປັນເຈົ້າຈະເຮັດຕາມສັນຍາເມື່ອເຮົາເຮັດຕາມສິ່ງທີ່ພຣະອົງກ່າວ; 14–18, ຊີໂອນຕ້ອງເພີ່ມພູນໃນຄວາມສວຍງາມ ແລະ ຄວາມສັກສິດ; 19–24, ທຸກໆຄົນຄວນສົນໃຈກັບຄວາມຢູ່ເຢັນເປັນສຸກຂອງເພື່ອນມະນຸດດ້ວຍກັນ.*

1 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ຜູ້ຮັບໃຊ້ຂອງເຮົາ, ວ່າຕາບໃດ
ທີ່ພວກເຈົ້າ [ກ]ໃຫ້ອະໄພການລ່ວງລະເມີດ
ຂອງພວກເຈົ້າແກ່ກັນ ແລະກັນ ສັນໃດ,
ແມ່ນແຕ່ສັນນັ້ນເຮົາ, ພຣະຜູ້ເປັນເຈົ້າ, ຈະ
ໃຫ້ອະໄພແກ່ພວກເຈົ້າ.
2 ເຖິງຢ່າງໃດກໍຕາມ, ກໍມີບາງຄົນໃນບັນ
ດາພວກເຈົ້າ ຜູ້ໄດ້ເຮັດບາບໜັກໜາ; ແທ້
ຈິງແລ້ວ, ແມ່ນແຕ່ທຸກຄົນໃນພວກເຈົ້າໄດ້
ເຮັດ [ກ]ບາບ; ແຕ່ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ຈົ່ງລະວັງນັບແຕ່ນີ້
ເປັນຕົ້ນໄປ, ແລະ ໃຫ້ຫລີກເວັ້ນຈາກບາບ,

5 *ກ* ມຊຍ 4:15–16.
*ຂ* ຄພ 108:7.
*ຄ* ອຊຢ 35:3.
6 *ກ* ຄນພ ອະມະຕະ, ຄວາມເປັນອະມະຕະ.
*ຂ* ຄນພ ສູງສົ່ງ, ຄວາມສູງສົ່ງ; ຊີວິດນິລັນດອນ.
*ຄ* ຢຮ 14:2–3; ຄພ 59:2; 106:8.
**82** 1 *ກ* ມທ 6:14–15; ຄພ 64:9–11.
2 *ກ* ຣມ 3:23.

ຖ້າບໍ່ດັ່ງນັ້ນການພິພາກສາຢ່າງສາຫັດຈະ
ຕົກໃສ່ເທິງຫົວຂອງພວກເຈົ້າ.
3 ເພາະຄົນໃດທີ່ຖືກປະທານໃຫ້ [ກ]ຫລາຍ
ກໍຈະຖືກ [ຂ]ຮຽກຮ້ອງຫລາຍ; ແລະ ຄົນໃດທີ່
ເຮັດ [ຄ]ບາບຕໍ່ [ງ]ຄວາມສະຫວ່າງຫລາຍ ກໍ
ຈະຖືກກ່າວໂທດຫລາຍ.
4 ພວກເຈົ້າເອີ້ນຫານາມຂອງເຮົາເພື່ອ
ຮັບ [ກ]ການເປີດເຜີຍ, ແລະ ເຮົາກໍມອບມັນ
ໃຫ້ແກ່ພວກເຈົ້າ; ແລະ ຕາບໃດທີ່ພວກ
ເຈົ້າບໍ່ຮັກສາຖ້ອຍຄຳຂອງເຮົາ, ຊຶ່ງເຮົາ
ມອບໃຫ້ແກ່ພວກເຈົ້າ, ແລ້ວພວກເຈົ້າກໍ
ກາຍເປັນຄົນລ່ວງລະເມີດ; ແລະ [ຂ]ຄວາມ
ຍຸດຕິທຳ ແລະ ການພິພາກສາເປັນໂທດ
ຊຶ່ງຕັ້ງໄວ້ກັບກົດຂອງເຮົາ.
5 ສະນັ້ນ, ສິ່ງໃດກໍຕາມທີ່ເຮົາກ່າວກັບ
ຄົນໜຶ່ງ ກໍຄືກັນກັບເຮົາກ່າວກັບທຸກຄົນ:
ຈົ່ງ [ກ]ເຝົ້າລະວັງ, ເພາະ [ຂ]ຜູ້ປໍລະປັກຈະແຜ່
ຂະຫຍາຍການຄອບຄອງຂອງເຂົາ, ແລະ
[ຄ]ຄວາມມືດຄອບງຳ;
6 ແລະ ພຣະພິໂລດຂອງພຣະເຈົ້າແມ່ນ
ລຸກເປັນໄຟກັບຜູ້ອາໄສຂອງແຜ່ນດິນໂລກ;
ແລະ ບໍ່ມີຄົນໃດເຮັດຄວາມດີ, ເພາະທຸກ
ຄົນໄດ້ອອກໄປຈາກ [ກ]ເສັ້ນທາງ.
7 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ, ເຮົາ, ພຣະຜູ້ເປັນ
ເຈົ້າ, ຈະ ບໍ່ຖື [ກ]ບາບອັນໃດເປັນຄວາມຜິດ
ຂອງພວກເຈົ້າ; ຈົ່ງໄປຕາມທາງຂອງພວກ
ເຈົ້າ ແລະ ຢ່າເຮັດບາບອີກຕໍ່ໄປ; ແຕ່ກັບ
ຄົນທີ່ເຮັດບາບ ບາບ [ຂ]ເກົ່າຈະກັບຄືນມາ,
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ
ໄດ້ກ່າວ.
8 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ, ເຮົາໃຫ້ບັນຍັດຂໍ້ [ກ]ໃໝ່ແກ່ພວກ
ເຈົ້າ, ເພື່ອວ່າພວກເຈົ້າຈະເຂົ້າໃຈຄວາມ
ປະສົງຂອງເຮົາກ່ຽວກັບພວກເຈົ້າ;
9 ຫລື, ອີກຄຳໜຶ່ງ, ເຮົາໃຫ້ການຊີ້ນຳແກ່
ພວກເຈົ້າເຖິງວິທີທີ່ພວກເຈົ້າຈະ [ກ]ປະພຶດ
ຢູ່ຕໍ່ໜ້າເຮົາ, ເພື່ອວ່າມັນຈະກັບຄືນມາຫາ
ພວກເຈົ້າເພື່ອຄວາມລອດຂອງພວກເຈົ້າ.
10 ເຮົາ, ພຣະຜູ້ເປັນເຈົ້າ, ຈະ [ກ]ເຮັດຕາມ
ສັນຍາເມື່ອພວກເຈົ້າເຮັດຕາມສິ່ງທີ່ເຮົາ
ກ່າວ; ແຕ່ເມື່ອພວກເຈົ້າບໍ່ເຮັດສິ່ງທີ່ເຮົາ
ກ່າວ, ແລ້ວພວກເຈົ້າກໍບໍ່ມີຄຳສັນຍາ.
11 ສະນັ້ນ, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ມັນເໝາະສົມສຳ
ລັບຜູ້ຮັບໃຊ້ຂອງເຮົາ ເອດເວີດ ພາດທຣິດ
ແລະ ນິວເອັນ ເຄ ວິດນີ, ເອ ຊິດນີ ກຽວເບີດ
ແລະ ຊິດນີ ຣິກດອນ, ແລະ ຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ ສະມິດ, ແລະ ຈອນ ວິດເມີ
ແລະ ອໍລີເວີ ຄາວເດີຣີ, ແລະ ດັບເບີນ
ຢູ ດັບເບີນຢູ ແຟ້ວສ໌ ແລະ ມາຕິນ ແຮຣິສ
ຈະຖືກ [ກ]ຜູກມັດນຳກັນໂດຍພັນທະ ແລະ
ພັນທະສັນຍາທີ່ຝ່າຝືນບໍ່ໄດ້ໂດຍການລ່ວງ
ລະເມີດ, ຍົກເວັ້ນແຕ່ການພິພາກສາຈະ

---

3 ກ ລກ 12:48; ຢກບ 4:17.
ຄມພ ຮັບຜິດຊອບ, ຮູ້
ຈັກຮັບຜິດຊອບ, ຄວາມ
ຮັບຜິດຊອບ.
ຂ ຄມພ ພິທັກຮັກສາ, ຜູ້ພິທັກ
ຮັກສາ, ການພິທັກຮັກສາ.
ຄ ຄມພ ບາບ;
ປະຖິ້ມຄວາມເຊື່ອ, ການ
ປະຖິ້ມຄວາມເຊື່ອ.
ງ ຢຮ 15:22–24.
ຄມພ ຄວາມສະຫວ່າງ,
ຄວາມສະຫວ່າງ
ຂອງພຣະຄຣິດ.
4 ກ ຄມພ ເປີດເຜີຍ,
ການເປີດເຜີຍ.
ຂ ຄມພ ຍຸດຕິທຳ,
ຄວາມຍຸດຕິທຳ.
5 ກ ຄມພ ຍາມ, ຄົນຍາມ.
ຂ ຄມພ ມານ.
ຄ ຄມພ ຄວາມມືດ
ທາງວິນຍານ.
6 ກ ຣມ 3:12; ຄພ 1:16.
7 ກ ຄມພ ບາບ.
ຂ ຄພ 1:32–33; 58:43.
8 ກ ຢຮ 13:34.
9 ກ ຄພ 43:8.
10 ກ ຢຊ 23:14;
1 ກສ 8:23;
ຄພ 1:38; 130:20–21.
ຄມພ ເຊື່ອຟັງ, ການເຊື່ອ
ຟັງ, ຟັງຄວາມ;
ພອນ, ໃຫ້ພອນ, ເປັນພອນ.
11 ກ ຄພ 78:3–7, 11–15.

ຕາມມາທັນທີ, ໃນຫລາຍສິ່ງຫລາຍຢ່າງທີ່
ຢູ່ໃນຄວາມພິທັກຮັກສາຂອງພວກເຈົ້າ—
12 ເພື່ອຈັດການກັບວຽກງານຂອງຄົນ
ຍາກຈົນ, ແລະ ທຸກສິ່ງທັງປວງທີ່ກ່ຽວກັບ
ຝ່າຍອະທິການ ທັງຢູ່ໃນ ແຜ່ນດິນຊີໂອນ
ແລະ ໃນແຜ່ນດິນເຄີດແລນ;
13 ເພາະເຮົາໄດ້ອຸທິດຖວາຍແຜ່ນດິນ
ເຄີດແລນໄວ້ໃນເວລາອັນເໝາະສົມຂອງ
ເຮົາເອງ ເພື່ອເປັນຜົນປະໂຫຍດໃຫ້ແກ່
ໄພ່ພົນຂອງພຣະຜູ້ສູງສຸດ, ແລະ ເພື່ອ
[ກ]ສະເຕກຕໍ່ຊີໂອນ.
14 ເພາະຊີໂອນຕ້ອງເພີ່ມພູນໃນຄວາມ
ສວຍງາມ, ແລະ ໃນຄວາມສັກສິດ; ເຂດ
ແດນຂອງນາງຕ້ອງ ຂະຫຍາຍອອກໄປໃຫ້
ກວ້າງ; ສະເຕກຂອງນາງຕ້ອງຖືກເຮັດໃຫ້
ເຂັ້ມແຂງຂຶ້ນ; ແທ້ຈິງແລ້ວ, ຕາມຄວາມຈິງ
ເຮົາກ່າວກັບພວກເຈົ້າວ່າ [ກ]ຊີໂອນຕ້ອງລຸກ
ຂຶ້ນ ແລະ ສວມ [ຂ]ອາພອນອັນງົດງາມຂອງ
ນາງ.
15 ສະນັ້ນ, ເຮົາຈຶ່ງໃຫ້ບັນຍັດຂໍ້ນີ້ແກ່
ພວກເຈົ້າ, ໃຫ້ພວກເຈົ້າຜູກມັດຕົນເອງ
ໂດຍພັນທະສັນຍານີ້, ແລະ ມັນຈະເປັນໄປ
ຕາມກົດຂອງພຣະຜູ້ເປັນເຈົ້າ.
16 ຈົ່ງເບິ່ງ, ນີ້ຄືປັນຍາໃນເຮົາຄືກັນ ເພື່ອ
ຄວາມດີຂອງພວກເຈົ້າ.
17 ແລະ ພວກເຈົ້າຕ້ອງ [ກ]ເທົ່າທຽມ
ກັນ, ຫລື ອີກຄຳໜຶ່ງ, ພວກເຈົ້າຕ້ອງມີ
ສິດເທົ່າທຽມກັນໃນຊັບສິນຕ່າງໆ, ເພື່ອ
ຜົນປະໂຫຍດຂອງການຈັດການກັບທຸລະ
ກິດໃນການເປັນຜູ້ພິທັກຮັກສາຂອງພວກ
ເຈົ້າ, ທຸກໆຄົນຕາມຄວາມຕ້ອງການ ແລະ
ຄວາມຈຳເປັນຂອງເຂົາ, ຕາບໃດທີ່ຄວາມ
ຕ້ອງການຂອງເຂົາສົມເຫດສົມຜົນ—
18 ແລະ ທັງໝົດນີ້ແມ່ນເພື່ອຜົນປະ
ໂຫຍດຂອງສາດສະໜາຈັກຂອງພຣະເຈົ້າ
ທີ່ຊົງພຣະຊົນຢູ່, ເພື່ອວ່າທຸກຄົນຈະໄດ້ພັດ
ທະນາ [ກ]ພອນສະຫວັນຂອງຕົນ, ເພື່ອທຸກ
ຄົນຈະໄດ້ຮັບພອນສະຫວັນອື່ນໆ, ແທ້ຈິງ
ແລ້ວ, ແມ່ນແຕ່ ເປັນຮ້ອຍເທົ່າ, ເພື່ອຈະເທ
ເຂົ້າໄປໃນ [ຂ]ຄັງຂອງພຣະຜູ້ເປັນເຈົ້າ, ເພື່ອ
ຈະກາຍເປັນຊັບສິນສ່ວນລວມຂອງທັງ
ສາດສະໜາຈັກ—
19 ໃຫ້ທຸກຄົນສົນໃຈກັບຄວາມຢູ່ເຢັນ
ເປັນສຸກຂອງເພື່ອນມະນຸດດ້ວຍກັນ, ແລະ
ເຮັດທຸກສິ່ງທັງປວງເພາະການທີ່ [ກ]ເຫັນແກ່
ລັດສະໝີພາບຂອງພຣະເຈົ້າແຕ່ຢ່າງດຽວ.
20 [ກ]ລະບົບນີ້ເຮົາໄດ້ກຳນົດໄວ້ ໃຫ້ເປັນ
ລະບົບອັນເປັນນິດແກ່ພວກເຈົ້າ, ແລະ ແກ່
ຜູ້ທີ່ຮັບຕຳແໜ່ງແທນພວກເຈົ້າ, ຕາບໃດທີ່
ພວກເຈົ້າບໍ່ໄດ້ເຮັດບາບ.
21 ແລະ ຄົນໃດທີ່ເຮັດບາບຕໍ່ພັນທະ
ສັນຍານີ້, ແລະ ເຮັດໃຈແຂງກະດ້າງຕໍ່ມັນ,
ຈະຖືກຈັດການຕາມ ກົດຂອງສາດສະໜາ
ຈັກຂອງເຮົາ, ແລະ ຈະຖືກສົ່ງໄປຮັບເອົາ
[ກ]ຄວາມທຸກທໍລະມານຂອງຊາຕານຈົນເຖິງ
ວັນແຫ່ງການໄຖ່.
22 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າ, ແລະ ນີ້ຄືປັນຍາ, ວ່າ
ຈົ່ງເປັນເພື່ອນກັບເງິນຄຳທີ່ເຮັດໃຫ້ບໍ່ຊອບ
ທຳ, ແລະ ມັນຈະບໍ່ທຳລາຍພວກເຈົ້າ.

13 *ກ* ອຊຢ 33:20; 54:2.
ຄມພ ສະເຕກ.
14 *ກ* ຄມພ ຊີໂອນ.
*ຂ* ອຊຢ 52:1;
ຄພ 113:7–8.
17 *ກ* ຄພ 51:3.
ຄມພ ອຸທິດຖວາຍ, ກົດ
ແຫ່ງການອຸທິດຖວາຍ.
18 *ກ* ມທ 25:14–30;
ຄພ 60:13.
ຄມພ ຂອງປະທານ;
ຂອງປະທານແຫ່ງ
ພຣະວິນຍານ.
*ຂ* ຄພ 42:30–34, 55;
119:1–3.
ຄມພ ຄັງ.
19 *ກ* ຄພ 88:67.
ຄມພ ຕາ.
20 *ກ* ຄມພ ລະບົບເອກະພາບ.
21 *ກ* ຄພ 104:8–10.

23 ຈົ່ງປະປ່ອຍການພິພາກສາໄວ້ກັບ
ເຮົາພຽງຜູ້ດຽວ, ເພາະມັນເປັນຂອງເຮົາ
ແລະ ເຮົາຈະ [ກ]ຕອບແທນ. ສັນຕິສຸກຈົ່ງ
ຢູ່ກັບພວກເຈົ້າ; ພອນຂອງເຮົາຈະຢູ່ກັບ
ພວກເຈົ້າຕໍ່ໄປ.
24 ເພາະແມ່ນແຕ່ [ກ]ອານາຈັກຍັງເປັນ
ຂອງພວກເຈົ້າ, ແລະ ຈະເປັນຕະຫລອດ
ການ; ຖ້າຫາກພວກເຈົ້າບໍ່ຕົກໄປຈາກ
ຄວາມໝັ້ນຄົງຂອງພວກເຈົ້າ. ແມ່ນເປັນດັ່ງ
ນັ້ນ. ອາແມນ.

# ພາກທີ 83

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງອິນດີເພັນເດັນສ໌, ລັດມີເຊີຣີ, ວັນທີ 30 ເດືອນເມສາ, 1832. ການເປີດເຜີຍນີ້ໄດ້ຮັບໃນຂະນະທີ່ສາດສະດານັ່ງຢູ່ໃນການປະຊຸມສະພາກັບພວກອ້າຍນ້ອງຂອງເພິ່ນ.*

*1–4, ຜູ້ຍິງ ແລະ ເດັກນ້ອຍມີສິດທີ່ຈະໄດ້ຮັບການລ້ຽງດູຈາກສາມີ ແລະ ພໍ່ຂອງພວກເຂົາ; 5–6, ແມ່ໝ້າຍ ແລະ ເດັກກຳພ້າມີສິດທີ່ຈະໄດ້ຮັບການລ້ຽງດູຈາກສາດສະໜາຈັກ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້, ນອກເໜືອໄປຈາກກົດຂອງ
ສາດສະໜາຈັກກ່ຽວກັບ ຜູ້ຍິງ ແລະ ເດັກ
ນ້ອຍແລ້ວ, ຄົນທີ່ເປັນຂອງສາດສະໜາ
ຈັກ, ຜູ້ໄດ້ [ກ]ສູນເສຍສາມີ ຫລື ພໍ່ຂອງພວກ
ເຂົາ:
2 ຜູ້ຍິງ [ກ]ມີສິດທີ່ຈະໄດ້ຮັບການລ້ຽງດູ
ຈາກສາມີຂອງພວກນາງ, ຈົນກວ່າສາມີ
ຂອງພວກນາງໄດ້ຈາກໄປ; ແລະ ຖ້າຫາກ
ພວກນາງຖືກພົບວ່າບໍ່ໄດ້ລ່ວງລະເມີດ,
ພວກນາງຈະມີສິດເປັນສະມາຊິກໃນສາດ
ສະໜາຈັກໄດ້.
3 ແລະ ຖ້າຫາກພວກນາງບໍ່ຊື່ສັດ ພວກ
ນາງຈະເປັນສະມາຊິກໃນສາດສະໜາຈັກ
ບໍ່ໄດ້; ແຕ່ພວກນາງສາມາດຢູ່ກັບມູນມໍລະ
ດົກຂອງພວກນາງໄດ້ຕາມກົດໝາຍຂອງ
ແຜ່ນດິນ.
4 [ກ]ເດັກນ້ອຍທຸກຄົນມີສິດທີ່ຈະໄດ້ຮັບ
ການລ້ຽງດູຈາກພໍ່ແມ່ຂອງຕົນ ຈົນກວ່າ
ພວກເຂົາເຕັມກະສຽນ.
5 ແລະ ຫລັງຈາກນັ້ນ, ພວກເຂົາມີສິດທີ່
ຈະໄດ້ຮັບຄວາມຊ່ວຍເຫລືອຈາກສາດສະ
ໜາຈັກ, ຫລື ອີກຄຳໜຶ່ງ ຈາກ [ກ]ຄັງຂອງ
ພຣະຜູ້ເປັນເຈົ້າ, ຖ້າຫາກວ່າພໍ່ແມ່ຂອງ
ພວກເຂົາບໍ່ມີສິ່ງໃດທີ່ຈະມອບໃຫ້ພວກ
ເຂົາເປັນມູນມໍລະດົກ.
6 ແລະ ຕ້ອງຮັກສາຄັງນັ້ນດ້ວຍສິ່ງອຸ
ທິດຖວາຍຂອງສາດສະໜາຈັກ; ແລະ
ຕ້ອງຈັດຫາໃຫ້ [ກ]ແມ່ໝ້າຍ ແລະ ເດັກກຳ
ພ້າ, ຕະຫລອດທັງ [ຂ]ຄົນຍາກຈົນນຳອີກ.
ອາແມນ.

23 *ກ* ຣມ 12:19; ມມ 3:15.
24 *ກ* ລກ 12:32; ຄພ 64:3–5. ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
**83** 1 *ກ* ຢກບ 1:27.
2 *ກ* 1 ຕມທ 5:8.
4 *ກ* ມຊຢ 4:14.
5 *ກ* ຄພ 78:3. ຄມພ ຄັງ.
6 *ກ* ຄມພ ແມ່ໝ້າຍ.
*ຂ* ມຊຢ 4:16–26; ຮລມ 4:11–13; ຄພ 42:30–39. ຄມພ ຍາກຈົນ.

# ພາກທີ 84

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 22 ແລະ 23 ເດືອນກັນຍາ, 1832. ລະຫວ່າງເດືອນກັນຍາ, ພວກແອວເດີໄດ້ເລີ່ມກັບຄືນມາຈາກການເຜີຍແຜ່ຂອງເຂົາເຈົ້າໃນລັດພາກຕາເວັນອອກຂອງສະຫະລັດ ແລະ ເພື່ອລາຍງານການທຳງານຂອງເຂົາເຈົ້າ. ໃນຂະນະທີ່ເຂົາເຈົ້າຢູ່ນຳກັນຢ່າງມີຄວາມສຸກນີ້ ສາດສະດາໄດ້ຮັບການສື່ສານດັ່ງຕໍ່ໄປນີ້. ສາດສະດາໄດ້ລະບຸມັນໄວ້ເປັນການເປີດເຜີຍກ່ຽວກັບຖານະປະໂລຫິດ.*

*1–5, ເຢຣູຊາເລັມໃໝ່ ແລະ ພຣະວິຫານຈະຖືກສ້າງຂຶ້ນໃນລັດມີເຊີຣີ; 6–17, ລຳດັບສາຍຂອງຖານະປະໂລຫິດຈາກ ໂມເຊ ເຖິງ ອາດາມ ໄດ້ຖືກມອບໃຫ້; 18–25, ຖານະປະໂລຫິດທີ່ສູງກວ່າມີຂໍກະແຈແຫ່ງຄວາມຮູ້ເລື່ອງພຣະເຈົ້າ; 26–32, ຖານະປະໂລຫິດທີ່ຕ່ຳກວ່າມີຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ ແລະ ຂອງພຣະກິດຕິຄຸນຂັ້ນຕຽມ; 33–44, ຜູ້ຄົນໄດ້ຮັບຊີວິດນິລັນດອນຜ່ານຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ; 45–53, ພຣະວິນຍານຂອງພຣະຄຣິດໃຫ້ຄວາມສະຫວ່າງແກ່ມະນຸດ, ແລະ ໂລກຈົມຢູ່ໃນບາບ; 54–61, ໄພ່ພົນຂອງພຣະເຈົ້າຕ້ອງເປັນພະຍານເຖິງສິ່ງທີ່ເຂົາເຈົ້າໄດ້ຮັບ; 62–76, ເຂົາເຈົ້າຕ້ອງສັ່ງສອນພຣະກິດຕິຄຸນ, ແລະ ເຄື່ອງໝາຍຈະຕິດຕາມມາ; 77–91, ພວກແອວເດີຕ້ອງໄປໂດຍບໍ່ເອົາກະເປົາເງິນ ຫລື ກະເປົາເຄື່ອງໄປນຳ, ແລະ ພຣະຜູ້ເປັນເຈົ້າຈະດູແລໃນສິ່ງທີ່ເຂົາເຈົ້າຕ້ອງການ; 92–97, ໂຣກລະບາດ ແລະ ການສາບແຊ່ງຈະເກີດກັບຄົນທີ່ປະຕິເສດພຣະກິດຕິຄຸນ; 98–102, ເພງໃໝ່ແຫ່ງການໄຖ່ຂອງຊີໂອນໄດ້ຖືກມອບໃຫ້; 103–110, ໃຫ້ທຸກຄົນຢືນຢູ່ໃນໜ້າທີ່ຂອງຕົນເອງ ແລະ ທຳງານໃນການເອີ້ນຂອງຕົນເອງ; 111–120, ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຕ້ອງປະກາດຄວາມໜ້າກຽດຊັງທີ່ກໍ່ໃຫ້ເກີດຄວາມເປົ່າປ່ຽວຂອງຍຸກສຸດທ້າຍ.*

1 ການເປີດເຜີຍຂອງພຣະເຢຊູຄຣິດທີ່
ມອບໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ ໂຈເຊັບ
ສະມິດ, ຜູ້ລູກ, ແລະ ພວກແອວເດີຫົກຄົນ,
ຂະນະທີ່ເຂົາເຈົ້າພ້ອມໃຈກັນ ແລະ [ກ]ເປັ່ງ
ສຽງຂອງເຂົາເຈົ້າຂຶ້ນສູ່ເບື້ອງບົນ.
2 ແທ້ຈິງແລ້ວ, ພຣະຄຳຂອງພຣະຜູ້ເປັນ
ເຈົ້າກ່ຽວກັບສາດສະໜາຈັກຂອງພຣະອົງ,
ໄດ້ຈັດຕັ້ງຂຶ້ນໃນຍຸກສຸດທ້າຍເພື່ອ [ກ]ການ
ຟື້ນຟູຜູ້ຄົນຂອງພຣະອົງ, ດັ່ງທີ່ພຣະອົງ
ໄດ້ກ່າວໂດຍປາກຂອງ [ຂ]ສາດສະດາຂອງ
ພຣະອົງ, ແລະ ເພື່ອການເຕົ້າໂຮມຂອງ
[ຄ]ໄພ່ພົນຂອງພຣະອົງ ເພື່ອຢືນຢູ່ [ງ]ເທິງພູ
ຊີໂອນ, ຊຶ່ງຈະເປັນເມືອງ [ຈ]ເຢຣູຊາເລັມ
ໃໝ່.
3 ຊຶ່ງເມືອງນັ້ນຈະຖືກສ້າງຂຶ້ນ, ໂດຍເລີ່ມ

**84** 1 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
2 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* ກຈກ 3:19–21.
*ຄ* ຄມພ ໄພ່ພົນຂອງພຣະເຈົ້າ.
*ງ* ອຊຢ 2:2–5; ຮຣ 12:22; ພນມ 14:1; ຄພ 76:66; 84:32; 133:18, 56.
*ຈ* ອທ 13:2–11; ຄພ 42:8–9; 45:66–67; ຫຼຊ 1:10. ຄມພ ເຢຣູຊາເລັມໃໝ່.

ຕົ້ນ ໃນບ່ອນທີ່ຈະ ສ້າງ [ກ]ພຣະວິຫານ, ຊຶ່ງ
ຖືກກຳນົດໄວ້ດ້ວຍນິ້ວພຣະຫັດຂອງພຣະ
ຜູ້ເປັນເຈົ້າ, ໃນເຂດແດນພາກຕາເວັນຕົກ
ຂອງລັດມີເຊີຣີ, ແລະ ຖືກອຸທິດໂດຍມືຂອງ
ໂຈເຊັບ ສະມິດ, ຜູ້ລູກ, ແລະ ຄົນອື່ນໆ ຜູ້
ຊຶ່ງພຣະຜູ້ເປັນເຈົ້າພໍພຣະໄທຫລາຍ.

4 ຕາມຄວາມຈິງແລ້ວ ນີ້ຄືພຣະຄຳຂອງ
ພຣະຜູ້ເປັນເຈົ້າ, ວ່າເມືອງ [ກ]ເຢຣູຊາເລັມ
ໃໝ່ ຈະ ຖືກສ້າງ ຂຶ້ນ ໂດຍການ ເຕົ້າ ໂຮມ
ຂອງ ໄພ່ພົນຂອງພຣະ ເຈົ້າ, ເລີ່ມຕົ້ນ ໃນ
ສະຖານ ທີ່ນີ້, ແມ່ນ ແຕ່ສະຖານທີ່ ຂອງ
[ຂ]ພຣະວິຫານ, ຊຶ່ງພຣະວິຫານຈະຖືກສ້າງ
ຂຶ້ນໃນຄົນລຸ້ນນີ້.

5 ເພາະ ຕາມຄວາມ ຈິງຄົນ ລຸ້ນ ນີ້ ຈະບໍ່
ລ່ວງລັບ ໄປ ຈົນກວ່າບ້ານແຫ່ງນີ້ຈະ ຖືກ
ສ້າງຂຶ້ນໃຫ້ແກ່ພຣະຜູ້ເປັນເຈົ້າ, ແລະ ເມກ
ຈະມາຢູ່ເທິງນັ້ນ, ຊຶ່ງເມກນັ້ນຈະເປັນແມ່ນ
ແຕ່ດັ່ງ [ກ]ລັດສະໝີພາບຂອງພຣະຜູ້ເປັນ
ເຈົ້າ, ຊຶ່ງຈະເຕັມຢູ່ໃນບ້ານ.

6 ແລະ ພວກລູກຊາຍຂອງໂມເຊ, ຕາມ
ຖານະປະໂລຫິດສັກສິດ ຊຶ່ງເພິ່ນໄດ້ຮັບ
ພາຍໃຕ້ [ກ]ມື ຂອງພໍ່ເຖົ້າຂອງເພິ່ນ, [ຂ]ເຢທະ
ໂຣ;

7 ແລະ ເຢທະໂຣ ໄດ້ຮັບມັນພາຍໃຕ້ມື
ຂອງ ກາເຫລັບ;

8 ແລະ ກາເຫລັບ ໄດ້ຮັບມັນພາຍໃຕ້ມື
ຂອງ ເອລີຮູ;

9 ແລະ ເອລີຮູ ພາຍໃຕ້ມືຂອງ ເຢເຣມີ;

10 ແລະ ເຢເຣມີ ພາຍໃຕ້ມືຂອງ ກາດ;

11 ແລະ ກາດ ພາຍໃຕ້ມືຂອງ ເອຊາອັດ;

12 ແລະ ເອຊາອັດ ໄດ້ຮັບມັນພາຍ ໃຕ້
ພຣະຫັດຂອງພຣະເຈົ້າ.

13 ເອຊາອັດກໍໄດ້ມີຊີວິດຢູ່ໃນວັນເວລາ
ຂອງອັບຣາຮາມຄືກັນ, ແລະ ໄດ້ຮັບພອນ
ຈາກເພິ່ນ—

14 ຊຶ່ງ [ກ]ອັບຣາຮາມໄດ້ຮັບຖານະປະໂລ
ຫິດຈາກ [ຂ]ເມນຄີເສເດັກ, ຜູ້ໄດ້ຮັບມັນຜ່ານ
ທາຍາດຂອງບັນພະບຸລຸດຂອງເພິ່ນ, ແມ່ນ
ແຕ່ຈົນເຖິງ [ຄ]ໂນອາ;

15 ແລະ ຈາກ ໂນອາຈົນ ເຖິງ [ກ]ເອນົກ,
ຜ່ານທາຍາດຂອງບັນພະບຸລຸດຂອງພວກ
ເພິ່ນ;

16 ແລະ ຈາກເອນົກ ເຖິງ [ກ]ອາເບັນ, ຜູ້
ຖືກ ຂ້າ ໂດຍ [ຂ]ແຜນ ລັບ ຂອງ ອ້າຍ ຂອງ
ລາວ, ຜູ້ [ຄ]ໄດ້ຮັບຖານະປະ ໂລຫິດ ໂດຍ
ພຣະບັນຊາຂອງພຣະເຈົ້າ, ໂດຍມືຂອງພໍ່
ຂອງລາວ [ງ]ອາດາມ, ຜູ້ເປັນມະນຸດຄົນທຳ
ອິດ—

17 ຊຶ່ງ [ກ]ຖານະ ປະ ໂລ ຫິດ ນັ້ນ ຍັງ ມີ ຢູ່
ຕໍ່ ໄປ ໃນສາດສະໜາຈັກຂອງພຣະເຈົ້າ
ຕະຫລອດທຸກຍຸກທຸກສະໄໝ, ແລະ ປາດ
ສະຈາກການເລີ່ມຕົ້ນຂອງມື້ ຫລື ການສິ້ນ
ສຸດຂອງປີ.

18 ແລະ ພຣະ ຜູ້ ເປັນ ເຈົ້າ ໄດ້ ຢືນ ຢັນ
[ກ]ຖານະປະໂລຫິດໄວ້ ເທິງ [ຂ]ອາໂຣນນຳ
ອີກ ແລະ ລູກຫລານຂອງເພິ່ນ, ຕະຫລອດ
ທຸກ ຍຸກ ທຸກ ສະໄໝ ຂອງ ພວກເພິ່ນ, ຊຶ່ງ
ຖານະ ປະ ໂລ ຫິດນັ້ນຍັງມີຢູ່ຕໍ່ໄປ ແລະ

---

3 *ກ* ຄພ 57:3.
4 *ກ* ຄມພ ເຢຣູຊາເລັມໃໝ່.
*ຂ* ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
5 *ກ* ຄພ 45:67; 64:41–43; 97:15–20; 109:12, 37.
6 *ກ* ຄມພ ມື, ການວາງ.
*ຂ* ຄມພ ເຢທະໂຣ.
14 *ກ* ຄມພ ອັບຣາຮາມ.
*ຂ* ຄມພ ເມນຄີເສເດັກ.
*ຄ* ຄມພ ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ.
15 *ກ* ຄມພ ເອນົກ.
16 *ກ* ຄມພ ອາເບັນ.
*ຂ* ມຊ 5:29–32.
*ຄ* ຄພ 107:40–57.
*ງ* ຄມພ ອາດາມ.
17 *ກ* ແອວ 13:1–19; ອຣຣ 2:9, 11.
ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
18 *ກ* ຄມພ ຖານະປະໂລຫິດແຫ່ງອາໂຣນ.
*ຂ* ຄມພ ອາໂຣນ, ອ້າຍຂອງໂມເຊ.

[ຄ]ຄົງຢູ່ຕະຫລອດໄປກັບຖານະປະໂລຫິດຊຶ່ງຕາມລະບຽບອັນສັກສິດທີ່ສຸດຂອງພຣະເຈົ້າ.

19 ແລະ ຖານະປະໂລຫິດດັ່ງກ່າວທີ່ສູງກວ່າປະຕິບັດພຣະກິດຕິຄຸນ ແລະ ຖືຂໍກະແຈແຫ່ງ [ກ]ຄວາມລຶກລັບ ຂອງອານາຈັກ, ແມ່ນແຕ່ຂໍກະແຈແຫ່ງ [ຂ]ຄວາມຮູ້ຂອງພຣະເຈົ້າ.

20 ສະນັ້ນ, ໃນ [ກ]ພິທີການດັ່ງກ່າວ, ອຳນາດຂອງຄວາມເປັນເໝືອນພຣະເຈົ້າຈະສະແດງໃຫ້ປະຈັກ.

21 ແລະ ຖ້າຫາກປາດສະຈາກພິທີການດັ່ງກ່າວ, ແລະ [ກ]ສິດອຳນາດຂອງຖານະປະໂລຫິດ, ອຳນາດຂອງຄວາມເປັນເໝືອນພຣະເຈົ້າ ຈະບໍ່ສະແດງໃຫ້ປະຈັກແກ່ມະນຸດໃນເນື້ອໜັງ;

22 ເພາະປາດສະຈາກສິ່ງນີ້ ບໍ່ມີ [ກ]ມະນຸດຄົນໃດຈະໄດ້ເຫັນພຣະພັກຂອງພຣະເຈົ້າ, ແມ່ນແຕ່ພຣະບິດາ, ແລະ ມີຊີວິດຢູ່.

23 ບັດນີ້ [ກ]ໂມເຊໄດ້ສິດສອນສິ່ງດັ່ງກ່າວຢ່າງແຈ່ມແຈ້ງ ແກ່ລູກຫລານຂອງອິດສະຣາເອນໃນຖິ່ນແຫ້ງແລ້ງກັນດານ, ແລະ ໄດ້ພະຍາຍາມຢ່າງພາກພຽນທີ່ຈະ [ຂ]ຊຳລະຜູ້ຄົນຂອງເພິ່ນໃຫ້ບໍລິສຸດ ເພື່ອວ່າພວກເຂົາຈະໄດ້ [ຄ]ເຫັນພຣະພັກຂອງພຣະເຈົ້າ;

24 ແຕ່ພວກເຂົາໄດ້ເຮັດໃຈ [ກ]ແຂງກະດ້າງ ແລະ ບໍ່ສາມາດອົດທົນກັບການປະທັບຢູ່ຂອງພຣະອົງ; ສະນັ້ນ, ພຣະຜູ້ເປັນເຈົ້າໃນຄວາມ [ຂ]ພຣະພິໂລດຂອງພຣະອົງ, ເພາະຄວາມໂມໂຫຂອງພຣະອົງໄດ້ເກີດກັບພວກເຂົາ, ໄດ້ສາບານວ່າພວກເຂົາຈະບໍ່ໄດ້ [ຄ]ເຂົ້າໄປໃນທີ່ພັກຂອງພຣະອົງ ໃນຂະນະທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານ, ຊຶ່ງທີ່ພັກນັ້ນຄືຄວາມສົມບູນແຫ່ງລັດສະໝີພາບຂອງພຣະອົງ.

25 ສະນັ້ນ, ພຣະອົງຈຶ່ງໄດ້ເອົາ [ກ]ໂມເຊໄປຈາກທ່າມກາງພວກເຂົາ, ແລະ ພ້ອມ [ຂ]ຖານະປະໂລຫິດສັກສິດດ້ວຍ;

26 ແລະ [ກ]ຖານະປະໂລຫິດທີ່ຕ່ຳກວ່າມີຢູ່ຕໍ່ໄປ, ຊຶ່ງຖານະປະໂລຫິດທີ່ຕ່ຳກວ່າຖື [ຂ]ຂໍກະແຈແຫ່ງ [ຄ]ການປະຕິບັດຂອງເຫລົ່າທູດ ແລະ ຂອງພຣະກິດຕິຄຸນຂັ້ນຕຽມ;

27 ຊຶ່ງພຣະກິດຕິຄຸນດັ່ງກ່າວຄືພຣະກິດຕິຄຸນແຫ່ງ [ກ]ການກັບໃຈ ແລະ ແຫ່ງ [ຂ]ການບັບຕິສະມາ, ແລະ [ຄ]ການປົດບາບ, ແລະ [ງ]ກົດຂອງພຣະບັນຍັດ [ຈ]ຝ່າຍໂລກ, ຊຶ່ງພຣະຜູ້ເປັນເຈົ້າໃນພຣະພິໂລດຂອງພຣະອົງໄດ້ເຮັດໃຫ້ມັນມີຢູ່ຕໍ່ໄປກັບເຊື້ອສາຍຂອງອາໂຣນ ໃນບັນດາລູກຫລານຂອງອິດສະຣາເອນຈົນເຖິງ [ສ]ໂຢຮັນ, ຜູ້ຊຶ່ງພຣະເຈົ້າໄດ້ຍົກຂຶ້ນ, ໂດຍທີ່ [ຊ]ເຕັມໄປດ້ວຍ

---

18 *ຄ* ຄພ 13.
19 *ກ* ຄພ 63:23; 107:18–19. ຄມພ ຄວາມລຶກລັບຂອງພຣະເຈົ້າ.
*ຂ* ອຣຣ 1:2.
20 *ກ* ຄມພ ພິທີການ.
21 *ກ* ຄມພ ສິດອຳນາດ; ຖານະປະໂລຫິດ.
22 *ກ* ຄພ 67:11.
23 *ກ* ອພຍ 19:5–11; 33:11.
*ຂ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຄ* ອພຍ 24:9–11; ຄພ 93:1.
24 *ກ* ອພຍ 20:18–21; 32:8; ພບຍ 9:23; 1 ນຟ 17:30–31, 42.
*ຂ* ພສສ 95:8; ຮຣ 3:8–11; ຢຄ 1:7–8; ແອວ 12:36.
*ຄ* ປຈສ ອພຍ 34:1–2 (ພາກທ້ອຍທ້າຍ); ຈບຊ 14:23; ຮຣ 4:1–11.
25 *ກ* ພບຍ 34:1–5.
*ຂ* ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
26 *ກ* ຄມພ ຖານະປະໂລຫິດແຫ່ງອາໂຣນ.
*ຂ* ຄພ 13.
*ຄ* ຄພ 107:20.
27 *ກ* ຄມພ ກັບໃຈ, ການກັບໃຈ.
*ຂ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຄ* ຄມພ ປົດບາບ, ການປົດບາບ.
*ງ* ຄມພ ກົດຂອງໂມເຊ.
*ຈ* ຮຣ 7:11–16.
*ສ* ຄມພ ໂຢຮັນບັບຕິສະໂຕ.
*ຊ* ລກ 1:15.

ພຣະວິນຍານບໍລິສຸດ ນັບແຕ່ຢູ່ໃນຄັນຂອງ
ແມ່ຂອງເພິ່ນ.
28 ເພາະ ເພິ່ນ ໄດ້ ຮັບ ບັບຕິ ສະມາ ໃນ
ຂະນະ ທີ່ ເພິ່ນຢູ່ໃນ ໄວເຍົາ, ແລະ ໄດ້ຮັບ
ການ ແຕ່ງ ຕັ້ງ ຕໍ່ ອຳນາດ ນີ້ ໂດຍ ທູດ ຂອງ
ພຣະເຈົ້າຕອນເພິ່ນມີອາຍຸໄດ້ແປດມື້, ເພື່ອ
ໂຄ່ນລົ້ມອານາຈັກຂອງຊາວຢິວ, ແລະ
ເພື່ອ [ກ]ຕຽມທາງຂອງພຣະຜູ້ເປັນເຈົ້າໃຫ້
ຊື່ຢູ່ຕໍ່ໜ້າຜູ້ຄົນຂອງພຣະອົງ, ເພື່ອຕຽມ
ພວກເຂົາສຳລັບການສະເດັດມາຂອງພຣະ
ຜູ້ເປັນເຈົ້າ, ຊຶ່ງໃນພຣະຫັດຂອງພຣະອົງ
[ຂ]ອຳນາດທັງມວນໄດ້ຖືກມອບໃຫ້.
29 ແລະ ອີກເທື່ອໜຶ່ງ, ຕຳແໜ່ງຂອງ
ແອວເດີ ແລະ ອະທິການ ເປັນ [ກ]ສ່ວນ
ປະກອບທີ່ຈຳເປັນຂອງຖານະປະໂລຫິດ
ສູງ.
30 ແລະ ອີກ ເທື່ອ ໜຶ່ງ, ຕຳ ແໜ່ງ ຂອງ
ຄູ ສອນ ແລະ ມັກຄະນາຍົກ ເປັນ ສ່ວນ
ປະກອບທີ່ຈຳເປັນຂອງຖານະປະໂລຫິດທີ່
ຕ່ຳກວ່າ, ຊຶ່ງຖານະປະໂລຫິດດັ່ງກ່າວໄດ້
ຖືກຢືນຢັນໄວ້ເທິງອາໂຣນ ແລະ ພວກລູກ
ຊາຍຂອງເພິ່ນ.
31 ສະນັ້ນ, ດັ່ງທີ່ຂ້າພະເຈົ້າໄດ້ກ່າວກ່ຽວ
ກັບພວກລູກຊາຍຂອງໂມເຊ—ເພາະພວກ
ລູກຊາຍຂອງໂມເຊ ແລະ ພວກລູກຊາຍ
ຂອງອາໂຣນນຳອີກ ຈະ [ກ]ຖວາຍ ເຄື່ອງ
ເຜົາ ແລະ ເຄື່ອງບູຊາອັນເປັນທີ່ຍອມຮັບ
ໃນບ້ານຂອງພຣະຜູ້ເປັນເຈົ້າ, ຊຶ່ງບ້ານນັ້ນ
ຈະຖືກສ້າງໃຫ້ແກ່ພຣະຜູ້ເປັນເຈົ້າໃນຄົນ
ລຸ້ນນີ້, ໄວ້ເທິງ [ຂ]ບ່ອນທີ່ໄດ້ຮັບການອຸທິດ
ຖວາຍແລ້ວ ດັ່ງທີ່ເຮົາໄດ້ກຳນົດໄວ້—
32 ແລະ ພວກລູກຊາຍຂອງໂມເຊ ແລະ
ຂອງອາໂຣນ ຈະເຕັມໄປດ້ວຍ [ກ]ລັດສະ
ໝີພາບຂອງພຣະຜູ້ເປັນເຈົ້າ, ຢູ່ເທິງ [ຂ]ພູ
ຊີໂອນໃນບ້ານຂອງພຣະຜູ້ເປັນເຈົ້າ, ຊຶ່ງ
ລູກຊາຍທັງຫລາຍຂອງພວກເພິ່ນຄືພວກ
ເຈົ້າ; ແລະ ຫລາຍຄົນອື່ນອີກ ຜູ້ຊຶ່ງເຮົາໄດ້
ເອີ້ນ ແລະ ໄດ້ສົ່ງອອກໄປສ້າງສາ [ຄ]ສາດ
ສະໜາຈັກຂອງເຮົາ.
33 ເພາະຜູ້ໃດທີ່ [ກ]ຊື່ສັດຕໍ່ການໄດ້ຮັບ
[ຂ]ຖານະປະໂລຫິດທັງສອງຢ່າງນີ້ ຊຶ່ງເຮົາ
ໄດ້ກ່າວມານັ້ນ, ແລະ ຂະຫຍາຍການເອີ້ນ
ຂອງຕົນ, ຍ່ອມໄດ້ຮັບການ [ຄ]ຊຳລະໃຫ້ບໍ
ລິສຸດແລ້ວໂດຍພຣະວິນຍານຈົນເຖິງການ
ເຮັດໃຫ້ຮ່າງກາຍຂອງພວກເຂົາໃໝ່ຄືນ
ອີກ.
34 ພວກ ເຂົາ ກາຍ ເປັນ ລູກ ຊາຍ ຂອງ
ໂມເຊ ແລະ ຂອງອາໂຣນ ແລະ ເປັນ [ກ]ເຊື້ອ
ສາຍຂອງ [ຂ]ອັບຣາຮາມ, ແລະ ເປັນຂອງ
ສາດສະໜາຈັກ ແລະ ອານາຈັກ, ແລະ
ເປັນ [ຄ]ຜູ້ຖືກເລືອກໄວ້ຂອງພຣະເຈົ້າ.
35 ແລະ ທຸກຄົນນຳອີກທີ່ຮັບເອົາຖານະ
ປະໂລຫິດນີ້ ກໍຮັບເອົາເຮົາຄືກັນ, ພຣະຜູ້
ເປັນເຈົ້າໄດ້ກ່າວ;
36 ເພາະຄົນໃດທີ່ຮັບເອົາຜູ້ຮັບໃຊ້ຂອງ
ເຮົາ ກໍ [ກ]ຮັບເອົາເຮົາຄືກັນ;

28 ກ ອຊຢ 40:3; ມທ 3:1–3; ຢຮ 1:23.
ຂ ມທ 28:18; ຢຮ 17:2; 1 ປຕ 3:22; ຄພ 93:16–17.
29 ກ ຄພ 107:5.
31 ກ ຄພ 128:24.
ຂ ຄພ 57:3.
32 ກ ຄມພ ລັດສະໝີພາບ.
ຂ ຮຮ 12:22; ຄພ 76:66; 84:2; 133:56.
ຄ ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
33 ກ ຄມພ ຄ່າຄວນ, ການມີຄ່າຄວນ.
ຂ ຄມພ ຖານະປະໂລຫິດ.
ຄ ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
34 ກ ຄລຕ 3:29; ອຣຣ 2:9–11. ຄມພ ອັບຣາຮາມ—ເຊື້ອສາຍຂອງອັບຣາຮາມ.
ຂ ຄພ 132:30–32. ຄມພ ພັນທະສັນຍາຂອງອັບຣາຮາມ.
ຄ ຄມພ ຖືກເລືອກ.
36 ກ ມທ 10:40–42; ລກ 10:16; ຄພ 112:20.

37 ແລະ ຄົນໃດທີ່ [ກ]ຮັບເອົາເຮົາ ກໍຮັບ
ເອົາພຣະບິດາຂອງເຮົາຄືກັນ;
38 ແລະ ຄົນ ໃດ ທີ່ຮັບ ເອົາ ພຣະ ບິດາ
ຂອງເຮົາ ກໍຮັບເອົາອານາ ຈັກ ຂອງ ພຣະ
ບິດາ ຂອງເຮົາ; ສະນັ້ນ [ກ]ທຸກ ສິ່ງທີ່ພຣະ
ບິດາຂອງເຮົາມີ ຈະຖືກມອບໃຫ້ແກ່ເຂົາ.
39 ແລະ ສິ່ງນີ້ເປັນໄປຕາມ [ກ]ຄຳສາບານ
ແລະ ພັນທະສັນຍາ ຊຶ່ງເປັນຂອງຖານະປະ
ໂລຫິດ.
40 ສະນັ້ນ, ທຸກຄົນ ເຫລົ່ານັ້ນທີ່ໄດ້ຮັບ
ຖານະປະໂລຫິດ, ໄດ້ຮັບຄຳສາບານ ແລະ
ພັນທະສັນຍາຂອງພຣະບິດາຂອງເຮົາ, ຊຶ່ງ
ເຂົາຈະຝ່າຝືນບໍ່ໄດ້, ທັງຈະປ່ຽນແປງບໍ່ໄດ້.
41 ແຕ່ຜູ້ໃດທີ່ [ກ]ຝ່າຝືນພັນທະສັນຍານີ້
ຫລັງຈາກເຂົາໄດ້ຮັບມັນແລ້ວ, ແລະ ຫັນໜີ
ຈາກມັນຢ່າງສິ້ນເຊີງ, ຈະ [ຂ]ບໍ່ໄດ້ຮັບການ
ໃຫ້ອະໄພຈາກບາບໃນໂລກນີ້ ຫລື ໃນ
ໂລກທີ່ຈະມາເຖິງ.
42 ແລະ ວິບັດແກ່ທຸກຄົນເຫລົ່ານັ້ນຜູ້ບໍ່
ມາຫາຖານະປະໂລຫິດນີ້ ຊຶ່ງພວກເຈົ້າໄດ້
ຮັບ, ຊຶ່ງບັດນີ້ເຮົາໄດ້ຢືນຢັນມັນໄວ້ເທິງຫົວ
ຂອງພວກເຈົ້າ ຜູ້ທີ່ຢູ່ໃນມື້ນີ້, ໂດຍສຸລະສຽງຂອງ
ເຮົາເອງທີ່ອອກມາຈາກສະຫວັນ; ແລະ
ແມ່ນແຕ່ ເຮົາກໍໄດ້ໃຫ້ [ກ]ເຫລົ່າທູດສະຫວັນ
ແລະ ທູດຂອງເຮົາດູແລເລື່ອງພວກເຈົ້າ.
43 ແລະ ບັດນີ້ເຮົາໄດ້ມອບບັນຍັດຂໍ້ໜຶ່ງ
ໃຫ້ແກ່ພວກເຈົ້າ ເພື່ອໃຫ້ລະວັງກ່ຽວກັບ
ຕົນເອງ, ເພື່ອໃຫ້ [ກ]ເອົາໃຈໃສ່ຢ່າງພາກ
ພຽນຕໍ່ພຣະຄຳແຫ່ງຊີວິດນິລັນດອນ.
44 ເພາະພວກເຈົ້າຕ້ອງ [ກ]ດຳລົງຊີວິດ
ຕາມທຸກຄຳທີ່ອອກມາຈາກພຣະໂອດຂອງ
ພຣະເຈົ້າ.
45 ເພາະ [ກ]ພຣະຄຳຂອງພຣະຜູ້ເປັນເຈົ້າ
ເປັນ [ຂ]ຄວາມຈິງ, ແລະ ສິ່ງໃດກໍຕາມທີ່ເປັນ
ຄວາມຈິງຄືຄວາມສະຫວ່າງ, ແລະ ສິ່ງໃດ
ກໍຕາມທີ່ເປັນຄວາມສະຫວ່າງຄືພຣະວິນ
ຍານ, ແມ່ນແຕ່ພຣະວິນຍານຂອງພຣະ
ເຢຊູຄຣິດ.
46 ແລະ ພຣະວິນຍານໃຫ້ [ກ]ຄວາມສະ
ຫວ່າງແກ່ [ຂ]ມະນຸດທຸກຄົນທີ່ມາສູ່ໂລກ;
ແລະ ພຣະວິນຍານໃຫ້ຄວາມສະຫວ່າງແກ່
ທຸກຄົນຕະຫລອດທົ່ວໂລກທີ່ເຊື່ອຟັງສຸລະ
ສຽງຂອງພຣະວິນຍານ.
47 ແລະ ທຸກຄົນທີ່ເຊື່ອຟັງສຸລະສຽງຂອງ
ພຣະວິນຍານຍ່ອມມາຫາພຣະເຈົ້າ, ແມ່ນ
ແຕ່ພຣະບິດາ.
48 ແລະ ພຣະບິດາຈະ [ກ]ສິດສອນເຂົາ
ເຖິງ [ຂ]ພັນທະສັນຍາ ຊຶ່ງພຣະອົງໄດ້ຕໍ່ ແລະ
ຢືນຢັນໄວ້ເທິງພວກເຈົ້າ, ຊຶ່ງໄດ້ຢືນຢັນໄວ້
ເທິງພວກເຈົ້າເພື່ອເຫັນແກ່ພວກເຈົ້າ, ແລະ
ບໍ່ແມ່ນເພື່ອເຫັນແກ່ພວກເຈົ້າພຽງເທົ່ານັ້ນ,
ແຕ່ເພື່ອເຫັນແກ່ໂລກທັງໂລກນຳອີກ.
49 ແລະ ໂລກທັງ [ກ]ໂລກຢູ່ໃນຄວາມ
ບາບ, ແລະ ຮ້ອງຄວນຄາງຢູ່ພາຍໃຕ້

37 *ກ* ຢຮ 13:20.
38 *ກ* ລກ 12:43–44; ຣມ 8:32; ພນມ 21:7; 3 ນຟ 28:10; ຄພ 132:18–20. ຄມພ ສູງສົ່ງ, ຄວາມສູງສົ່ງ.
39 *ກ* ຄມພ ຄຳສາບານ ແລະ ພັນທະສັນຍາຂອງ ຖານະປະໂລຫິດ.
41 *ກ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຂ* ຄພ 76:34–38; 132:27.
42 *ກ* ຄພ 84:88.
43 *ກ* 1 ນຟ 15:23–25; ຄພ 1:14.
44 *ກ* ພບຍ 8:3; ມທ 4:4; ຄພ 98:11.
45 *ກ* ພສສ 33:4. ຄມພ ພຣະຄຳ ຂອງພຣະເຈົ້າ.
*ຂ* ຄມພ ຈິງ, ຄວາມຈິງ.
46 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງ ພຣະຄຣິດ; ສຳນຶກ, ຄວາມສຳນຶກ.
*ຂ* ຢຮ 1:9; ຄພ 93:2.
48 *ກ* ຄມພ ດົນໃຈ, ການດົນໃຈ.
*ຂ* ຄມພ ພັນທະສັນ ຍາ; ພັນທະສັນຍາ ໃໝ່ ແລະ ເປັນນິດ.
49 *ກ* 1 ຢຮ 5:19.

[ຂ]ຄວາມ ມືດ ແລະ ຢູ່ ພາຍ ໃຕ້ ຄວາມ ເປັນ ທາດຂອງບາບ.

50 ແລະ ໂດຍ ສິ່ງ ນີ້ ພວກ ເຈົ້າ ຈະ ຮູ້ ວ່າ ພວກເຂົາຢູ່ພາຍໃຕ້ [ກ]ຄວາມເປັນທາດຂອງ [ຂ]ບາບ, ເພາະວ່າພວກເຂົາບໍ່ໄດ້ມາຫາເຮົາ.

51 ເພາະ ຄົນ ໃດກໍ ຕາມ ທີ່ ບໍ່ ມາຫາ ເຮົາ ຍ່ອມຢູ່ພາຍໃຕ້ຄວາມເປັນທາດຂອງບາບ.

52 ແລະ ຜູ້ໃດກໍ ຕາມທີ່ບໍ່ຍອມຮັບສຽງ ຂອງເຮົາ ຍ່ອມບໍ່ຄຸ້ນເຄີຍກັບ [ກ]ສຽງຂອງ ເຮົາ, ແລະ ບໍ່ໄດ້ເປັນຂອງເຮົາ.

53 ແລະ ໂດຍ ສິ່ງ ນີ້ພວກເຈົ້າຈະຮູ້ຈັກ ຄົນຊອບທຳຈາກຄົນຊົ່ວ, ແລະ ວ່າໂລກທັງ [ກ]ໂລກຈະ [ຂ]ຮ້ອງຄວນຄາງພາຍໃຕ້ [ຄ]ບາບ ແລະ ຄວາມມືດແມ່ນແຕ່ບັດນີ້.

54 ແລະ ໃນເວລາທີ່ຜ່ານມາ ຈິດໃຈຂອງ ພວກເຈົ້າຖືກເຮັດໃຫ້ມືດມົນເພາະຄວາມ [ກ]ບໍ່ເຊື່ອຖື, ແລະ ເພາະພວກເຈົ້າໄດ້ເຮັດ ຫລິ້ນໆກັບສິ່ງທີ່ພວກເຈົ້າໄດ້ຮັບ—

55 ຊຶ່ງ [ກ]ຄວາມ ໂອ້ອວດ ແລະ ຄວາມບໍ່ ເຊື່ອຖືໄດ້ນຳທັງສາດສະໜາຈັກມາຢູ່ພາຍ ໃຕ້ການກ່າວໂທດ.

56 ແລະ ການກ່າວ ໂທດນີ້ຈະຢູ່ເທິງລູກ ຫລານຂອງຊີໂອນ, ແມ່ນແຕ່ທັງໝົດ.

57 ແລະ ເຂົາ ຈະຢູ່ພາຍ ໃຕ້ການກ່າວ ໂທດນີ້ຈົນກວ່າເຂົາຈະກັບໃຈ ແລະ ຈື່ຈຳ [ກ]ພັນທະສັນຍາໃໝ່, ແມ່ນແຕ່ [ຂ]ພຣະຄຳພີ ມໍມອນ ແລະ ບັນຍັດ [ຄ]ກ່ອນນັ້ນ ຊຶ່ງເຮົາໄດ້ ປະທານໃຫ້ເຂົາ, ບໍ່ແມ່ນພຽງເພື່ອກ່າວເທົ່າ ນັ້ນ, ແຕ່ເພື່ອ [ງ]ເຮັດຕາມທີ່ເຮົາໄດ້ຂຽນໄວ້ ນຳອີກ—

58 ເພື່ອວ່າເຂົາຈະໄດ້ນຳຜົນອັນເໝາະ ສົມກັບອານາຈັກຂອງພຣະບິດາອອກມາ; ຖ້າບໍ່ດັ່ງນັ້ນການຂ້ຽນຕີ ແລະ ການພິພາກ ສາຈະຖອກເທລົງມາເທິງລູກຫລານຂອງ ຊີໂອນຢູ່.

59 ເພາະ ລູກ ຫລານ ຂອງ ອາ ນາ ຈັກ ຈະ ເຮັດ ໃຫ້ແຜ່ນດິນສັກສິດ ຂອງເຮົາສົກກະ ປົກບໍ? ຕາມຄວາມຈິງແລ້ວ, ເຮົາກ່າວກັບ ເຈົ້າວ່າ, ບໍ່ເລີຍ.

60 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ ພວກເຈົ້າ ຜູ້ໄດ້ຍິນ [ກ]ຄຳຂອງເຮົາໃນຕອນ ນີ້, ຊຶ່ງເປັນສຽງຂອງເຮົາ, ພວກເຈົ້າເປັນ ສຸກ ແລ້ວ ຕາບ ໃດທີ່ພວກເຈົ້າຮັບເອົາສິ່ງ ເຫລົ່ານີ້;

61 ເພາະ ເຮົາ ຈະ [ກ]ໃຫ້ອະ ໄພ ພວກ ເຈົ້າ ກ່ຽວກັບບາບຂອງພວກເຈົ້າພ້ອມດ້ວຍບັນ ຍັດ ຂໍ້ ນີ້—ພວກ ເຈົ້າ ຕ້ອງ ຍຶດໝັ້ນ ໃນ ຈິດ ໃຈຂອງພວກເຈົ້າດ້ວຍຄວາມ [ຂ]ນອບນ້ອມ ແລະ ໃນວິນຍານແຫ່ງການອະທິຖານ, ໃນ ການ ສະ ແດງປະຈັກພະຍານ ຕໍ່ ໂລກ ເຖິງ ເລື່ອງ ເຫລົ່ານັ້ນ ທີ່ ໄດ້ ສື່ສານ ມາ ເຖິງ ພວກ ເຈົ້າ.

62 ສະນັ້ນ, ພວກເຈົ້າຈົ່ງ [ກ]ໄປທົ່ວ ໂລກ; ແລະ ບ່ອນໃດກໍຕາມທີ່ພວກເຈົ້າບໍ່ສາມາດ ໄປ ຫາ ໃຫ້ພວກເຈົ້າສົ່ງມັນໄປ, ເພື່ອວ່າ ປະຈັກພະຍານນັ້ນຈະໄດ້ອອກຈາກພວກ ເຈົ້າ ໄປທົ່ວ ໂລກ ເຖິງ ມະນຸດ ສະ ໂລກທັງ ໝົດ.

---

49 *ຂ* ຄນພ ຄວາມມືດ ທາງວິນຍານ.
50 *ກ* ຄລຕ 4:9.
*ຂ* ຄນພ ບາບ.
52 *ກ* ຢຮ 10:27.
53 *ກ* ຄນພ ໂລກ.
*ຂ* ຣມ 8:22; ມຊ 7:48.
*ຄ* ຄນພ ຄວາມເປັນ ຢູ່ທາງໂລກ.
54 *ກ* ຄນພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
55 *ກ* ຄນພ ອວດອົ່ງ, ຄວາມອວດອົ່ງ.
57 *ກ* ຢມຢ 31:31–34.
*ຂ* ຄນພ ພຣະຄຳພີມໍມອນ.
*ຄ* 1 ນຟ 13:40–41.
*ງ* ຢກບ 1:22–25; ຄພ 42:13–15.
60 *ກ* ຄພ 18:34–36.
61 *ກ* ດນອ 9:9. ຄນພ ອະໄພ, ໃຫ້ອະໄພ.
*ຂ* ຄພ 43:34; 88:121; 100:7.
62 *ກ* ມຣກ 16:15; ຄພ 1:2–5. ຄນພ ວຽກງານເຜີຍແຜ່.

63 ແລະ ດັ່ງທີ່ເຮົາໄດ້ກ່າວກັບອັກຄະ
ສາວົກຂອງເຮົາສັນໃດ, ແມ່ນ ແຕ່ສັນນັ້ນ
ເຮົາຈະກ່າວກັບພວກເຈົ້າ, ເພາະ ພວກ
ເຈົ້າເປັນ [ກ]ອັກຄະສາວົກຂອງເຮົາ, ແມ່ນ
ແຕ່ມະຫາປະໂລຫິດຂອງພຣະເຈົ້າ; ພວກ
ເຈົ້າຄືຜູ້ທີ່ພຣະບິດາຂອງເຮົາໄດ້ [ຂ]ມອບໃຫ້
ເຮົາ; ພວກເຈົ້າຄື [ຄ]ມິດສະຫາຍຂອງເຮົາ;
64 ສະນັ້ນ, ດັ່ງທີ່ເຮົາໄດ້ກ່າວກັບອັກຄະ
ສາວົກຂອງເຮົາ, ເຮົາກ່າວກັບພວກເຈົ້າ
ອີກ, ວ່າ [ກ]ທຸກຄົນທີ່ [ຂ]ເຊື່ອຖ້ອຍຄຳຂອງ
ພວກເຈົ້າ, ແລະ ຮັບບັບຕິສະມາໂດຍນ້ຳ
ເພື່ອ [ຄ]ການປົດບາບ, ຈະໄດ້ຮັບ [ງ]ພຣະວິນ
ຍານບໍລິສຸດ.
65 ແລະ [ກ]ເຄື່ອງໝາຍ ເຫລົ່ານີ້ ຈະ ຕິດ
ຕາມຄົນທີ່ເຊື່ອ—
66 ໃນນາມຂອງເຮົາ ພວກເຂົາຈະເຮັດ
[ກ]ວຽກງານ ອັນໜ້າອັດສະຈັນໃຈຫລາຍ
ຢ່າງ;
67 ໃນ [ກ]ນາມຂອງເຮົາ ພວກເຂົາຈະຂັບ
ໄລ່ຜີມານໃຫ້ອອກໄປ;
68 ໃນນາມຂອງເຮົາ ພວກເຂົາຈະ [ກ]ປິ່ນ
ປົວຄົນເຈັບປ່ວຍ;
69 ໃນນາມຂອງເຮົາ ພວກເຂົາຈະເປີດ
ຕາຂອງຄົນຕາບອດ, ແລະ ເປີດຫູຂອງຄົນ
ຫູໜວກ;
70 ແລະ ລີ້ນຂອງຄົນປາກກືກຈະເວົ້າ
ໄດ້;
71 ແລະ ຖ້າຄົນໃດຈະໃສ່ [ກ]ຢາພິດພວກ
ເຂົາ ມັນກໍຈະບໍ່ເປັນອັນຕະລາຍ ຕໍ່ພວກ
ເຂົາ;
72 ແລະ ພິດຂອງງູ ຈະບໍ່ມີພະລັງທີ່ຈະ
ທຳຮ້າຍພວກເຂົາ.
73 ແຕ່ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່
ພວກເຂົາ, ວ່າພວກເຂົາຈະບໍ່ [ກ]ອວດອ້າງ
ຕົນເອງເຖິງເລື່ອງເຫລົ່ານີ້, ທັງບໍ່ໃຫ້ກ່າວ
ເຖິງເລື່ອງເຫລົ່ານີ້ຢູ່ຕໍ່ໜ້າໂລກ; ເພາະ
ເລື່ອງເຫລົ່ານີ້ໄດ້ຖືກມອບໃຫ້ພວກເຈົ້າ
ເພື່ອຜົນປະໂຫຍດຂອງພວກເຈົ້າ ແລະ
ເພື່ອຄວາມລອດຂອງພວກເຈົ້າ.
74 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ຄົນທີ່ບໍ່ເຊື່ອຖ້ອຍຄຳຂອງພວກ
ເຈົ້າ, ແລະ ບໍ່ [ກ]ຮັບບັບຕິສະມາໃນນ້ຳໃນ
ນາມຂອງເຮົາ, ເພື່ອການປົດບາບຂອງ
ພວກເຂົາ, ເພື່ອພວກເຂົາຈະໄດ້ຮັບພຣະ
ວິນຍານບໍລິສຸດ, ຈະ [ຂ]ອັບປະໂຫຍດ, ແລະ
ຈະບໍ່ໄດ້ມາຫາອານາຈັກຂອງພຣະບິດາ
ຂອງເຮົາ ບ່ອນທີ່ພຣະບິດາຂອງເຮົາ ແລະ
ເຮົາຢູ່.
75 ແລະ ການເປີດເຜີຍນີ້ທີ່ພວກເຈົ້າໄດ້
ຮັບ, ແລະ ບັນຍັດ, ມີຜົນນັບແຕ່ຊົ່ວໂມງນີ້
ໄປເຖິງທົ່ວໂລກ, ແລະ ພຣະກິດຕິຄຸນໄປ
ເຖິງທຸກຄົນທີ່ຍັງບໍ່ໄດ້ຮັບມັນເທື່ອ.
76 ແຕ່, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບທຸກຄົນເຫລົ່ານັ້ນ ຜູ້ຊຶ່ງອານາຈັກຖືກ
ມອບໃຫ້—ພວກເຈົ້າຕ້ອງນຳສິ່ງນີ້ໄປສັ່ງ
ສອນພວກເຂົາ, ເພື່ອວ່າພວກເຂົາຈະກັບ

63 *ກ* ຄມພ ອັກຄະສາວົກ.
*ຂ* 3 ນຟ 15:24; ຄພ 50:41–42.
*ຄ* ຢຮ 15:13–15; ຄພ 93:45.
64 *ກ* ຄມພ ຈິດວິນຍານ.
*ຂ* ມຣກ 16:15–16. ຄມພ ເຊື່ອ, ຄວາມເຊື່ອ.
*ຄ* ຄມພ ປົດບາບ, ການປົດບາບ.
*ງ* ຄມພ ຂອງປະທານແຫ່ງ ພຣະວິນຍານບໍລິສຸດ.
65 *ກ* ມຣກ 16:17–18. ຄມພ ເຄື່ອງໝາຍ.
66 *ກ* ຄມພ ວຽກງານ.
67 *ກ* ມທ 17:14–21.
68 *ກ* ຄມພ ປິ່ນປົວ, ການປິ່ນປົວ.
71 *ກ* ມຣກ 16:18; ກຈກ 28:3–9; ຄພ 24:13; 124:98–100.
73 *ກ* ຄພ 105:24. ຄມພ ຈອງຫອງ, ຄວາມຈອງຫອງ.
74 *ກ* 2 ນຟ 9:23; ຄພ 76:50–52. ຄມພ ບັບຕິສະມາ, ໃຫ້ ບັບຕິສະມາ—ຈຳເປັນ.
*ຂ* ຢຮ 3:18.

ໃຈ ຈາກ ວຽກ ງານ ອັນ ຊົ່ວ ຮ້າຍ ທີ່ ຜ່ານ ມາ
ຂອງພວກເຂົາ; ເພາະພວກເຂົາຈະຖືກຕຳ
ນິເນື່ອງດ້ວຍໃຈອັນຊົ່ວຮ້າຍຂອງພວກເຂົາ
ທີ່ບໍ່ເຊື່ອ, ແລະ ອ້າຍນ້ອງຂອງພວກເຈົ້າໃນ
ຊີໂອນເນື່ອງດ້ວຍການກະບົດຂອງພວກ
ເຂົາຕໍ່ພວກເຈົ້າໃນເວລາທີ່ເຮົາໄດ້ສົ່ງພວກ
ເຈົ້າໄປ.
77 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າ, ເພື່ອນທັງຫລາຍຂອງເຮົາ, ເພາະນັບ
ແຕ່ນີ້ເປັນຕົ້ນໄປເຮົາຈະເອີ້ນພວກເຈົ້າວ່າ
ເພື່ອນ, ມັນເປັນສິ່ງຈຳເປັນທີ່ເຮົາຈະມອບ
ບັນຍັດຂໍ້ນີ້ແກ່ພວກເຈົ້າ, ເພື່ອວ່າພວກເຈົ້າ
ຈະກາຍເປັນແມ່ນແຕ່ ເພື່ອນຂອງເຮົາໃນ
ເວລາທີ່ເຮົາຢູ່ນຳພວກເຂົາ, ເດີນທາງໄປສັ່ງ
ສອນພຣະກິດຕິຄຸນໃນອຳນາດຂອງເຮົາ;
78 ເພາະ ເຮົາ ບໍ່ ຍອມ ໃຫ້ພວກ ເຂົາມີ
[ກ]ກະເປົາເງິນ ຫລື ກະເປົາເຄື່ອງ, ທັງບໍ່ໃຫ້
ມີເສື້ອໃຫຍ່ສອງໂຕນຳອີກ.
79 ຈົ່ງ ເບິ່ງ, ເຮົາສົ່ງພວກ ເຈົ້າອອກ ໄປ
ເພື່ອພິສູດໂລກ, ແລະ ຄົນງານກໍເໝາະສົມ
ກັບ [ກ]ຄ່າຈ້າງຂອງເຂົາ.
80 ແລະ ຄົນໃດທີ່ຈະໄປ ແລະ [ກ]ສັ່ງສອນ
[ຂ]ພຣະກິດຕິຄຸນຂອງອານາຈັກ, ແລະ ບໍ່
ລົ້ມເຫລວທີ່ຈະຊື່ສັດຕໍ່ໄປໃນທຸກສິ່ງ, ຈະບໍ່
ເມື່ອຍລ້າໃນຈິດໃຈ, ທັງບໍ່ມືດມົນ, ທັງໃນ
ຮ່າງກາຍ, ແຂນຂາ, ຫລື ຂໍ້ຕໍ່; ແລະ [ຄ]ຜົມ
ເສັ້ນໜຶ່ງຈາກຫົວຂອງເຂົາ ກໍຈະບໍ່ລົ່ນລົງ
ພື້ນດິນຢ່າງບໍ່ຖືກສັງເກດເຫັນ. ແລະ ພວກ
ເຂົາຈະບໍ່ຫິວ, ທັງບໍ່ກະຫາຍເລີຍ.
81 ສະນັ້ນ, ຢ່າ [ກ]ຄິດນຳມື້ອື່ນ, ວ່າພວກ
ເຈົ້າຈະກິນຫຍັງ, ຫລື ພວກເຈົ້າຈະດື່ມ
ຫຍັງ, ຫລື ພວກເຈົ້າຈະນຸ່ງຫົ່ມຫຍັງ.
82 ເພາະ, ຈົ່ງສັງເກດເບິ່ງດອກໄມ້ໃນ
ທົ່ງ, ວ່າມັນເຕີບໂຕຂຶ້ນໄດ້ແນວໃດ, ມັນບໍ່
ໄດ້ທຳງານ ທັງບໍ່ໄດ້ເຂັນຝ້າຍ; ແລະ ອານາ
ຈັກຂອງໂລກ, ໃນຄວາມສະຫງ່າລາສີທັງ
ໝົດຂອງມັນ, ຍັງບໍ່ໄດ້ທົງເຄື່ອງງາມເທົ່າ
ກັບດອກໄມ້ເຫລົ່ານີ້ດອກໜຶ່ງ.
83 ເພາະ [ກ]ພຣະບິດາຂອງພວກເຈົ້າ, ຜູ້
ສະຖິດຢູ່ໃນສະຫວັນ, [ຂ]ຮູ້ວ່າພວກເຈົ້າຕ້ອງ
ການສິ່ງທັງໝົດນີ້.
84 ສະ ນັ້ນ, ໃຫ້ ມື້ ອື່ນ [ກ]ຄິດ ເຖິງ ເລື່ອງ
ຂອງມັນເອງ.
85 ທັງ ບໍ່ ໃຫ້ ພວກ ເຈົ້າ ຄິດ ລ່ວງ ໜ້າ ວ່າ
ພວກເຈົ້າຈະກ່າວ [ກ]ຫຍັງ; ແຕ່ໃຫ້ [ຂ]ສະສົມ
ຖ້ອຍຄຳແຫ່ງຊີວິດໄວ້ໃນຈິດໃຈຂອງພວກ
ເຈົ້າເລື້ອຍໄປ, ແລະ ມັນຈະຖືກ [ຄ]ມອບໃຫ້
ແກ່ພວກເຈົ້າໃນຊົ່ວໂມງນັ້ນເອງ ສ່ວນທີ່
ຈະຜອງໃຫ້ແກ່ມະນຸດທຸກຄົນ.
86 ສະ ນັ້ນ, ຢ່າ ໃຫ້ ຄົນ ໃດ ໃນ ບັນ ດາ
ພວກ ເຈົ້າ, ທີ່ ຈະ ອອກ ໄປ ປະ ກາດ ພຣະ
ກິດຕິຄຸນນີ້ຂອງອານາຈັກຈາກຊົ່ວໂມງນີ້
ເອົາກະເປົາເງິນ ຫລື ກະເປົາເຄື່ອງໄປນຳ;
ເພາະບັນຍັດຂໍ້ນີ້ແມ່ນສຳລັບທຸກຄົນທີ່ [ກ]ຊື່
ສັດຜູ້ຖືກເອີ້ນຈາກພຣະເຈົ້າໃນສາດສະ
ໜາຈັກ ໃຫ້ປະຕິບັດສາດສະໜາກິດ.
87 ຈົ່ງເບິ່ງ, ເຮົາ [ກ]ສົ່ງພວກເຈົ້າໄປເພື່ອ
ຕຳນິໂລກ ເຖິງການກະທຳທີ່ບໍ່ຊອບທຳທັງ

78 *ກ* ມທ 10:9–10; ຄພ 24:18.
79 *ກ* ຄພ 31:5.
80 *ກ* ຄມພ ວຽກງານເຜີຍແຜ່.
*ຂ* ຄມພ ພຣະກິດຕິຄຸນ.
*ຄ* ລກ 21:18.
81 *ກ* ມທ 6:25–28.
83 *ກ* ຄມພ ພຣະບິດາຜູ້ສະ ຖິດຢູ່ໃນສະຫວັນ.
*ຂ* ມທ 6:8.
84 *ກ* ມທ 6:34.
85 *ກ* ມທ 10:19–20; ລກ 12:11–12; ຄພ 100:6.
*ຂ* 2 ນຟ 31:20; ແອວ 17:2–3; ຄພ 6:20; 11:21–26.
ຄມພ ໄຕ່ຕອງ.
*ຄ* ຄມພ ສອນ, ຜູ້ສອນ, ຄູສອນ—ການສອນ ດ້ວຍພຣະວິນຍານ.
86 *ກ* ມທ 24:44–46; ຄພ 58:26–29; 107:99–100.
87 *ກ* ຄມພ ວຽກງານເຜີຍແຜ່.

ໝົດ ຂອງ ພວກ ເຂົາ, ແລະ ເພື່ອ ສິດ ສອນ
ພວກເຂົາເຖິງການພິພາກສາທີ່ຈະມາເຖິງ.
88 ແລະ ຜູ້ໃດກໍຕາມທີ່ [ກ]ຮັບເອົາພວກ
ເຈົ້າ, ທີ່ນັ້ນເຮົາຈະຢູ່ນຳຄືກັນ, ເພາະເຮົາ
ຈະ ອອກໜ້າ ພວກ ເຈົ້າ. ເຮົາ ຈະ ຢູ່ ທາງ
ເບື້ອງຂວາ ມື ພວກ ເຈົ້າ ແລະ ທາງຊ້າຍ
ພວກເຈົ້າ, ແລະ ວິນຍານຂອງເຮົາຈະຢູ່ໃນ
ໃຈຂອງພວກເຈົ້າ, ແລະ [ຂ]ທູດຂອງເຮົາຈະ
ອ້ອມຮອບພວກເຈົ້າໄວ້, ເພື່ອຄ້ຳຊູພວກ
ເຈົ້າ.
89 ຜູ້ໃດກໍຕາມທີ່ຮັບເອົາພວກເຈົ້າ ກໍຮັບ
ເອົາເຮົາຄືກັນ; ແລະ ຄົນໆນັ້ນຈະເອົາເຂົ້າ
ໃຫ້ພວກເຈົ້າກິນ, ແລະ ຈະເອົາເຄື່ອງໃຫ້
ພວກເຈົ້ານຸ່ງ, ແລະ ຈະມອບເງິນໃຫ້ພວກ
ເຈົ້າ.
90 ແລະ ຄົນທີ່ເອົາເຂົ້າໃຫ້ພວກເຈົ້າກິນ,
ຫລື ເອົາເຄື່ອງໃຫ້ພວກເຈົ້ານຸ່ງ, ຫລື ມອບ
ເງິນ ໃຫ້ພວກເຈົ້າ, ຈະບໍ່ມີທາງ [ກ]ສູນເສຍ
ລາງວັນຂອງເຂົາໄປ.
91 ແລະ ຄົນທີ່ບໍ່ເຮັດສິ່ງເຫລົ່ານີ້ ບໍ່ໄດ້
ເປັນສານຸສິດຂອງເຮົາ; ໂດຍການນີ້ພວກ
ເຈົ້າຈະຮູ້ວ່າໃຜເປັນ [ກ]ສານຸສິດຂອງເຮົາ.
92 ຄົນທີ່ບໍ່ຮັບເອົາພວກເຈົ້າ, ໃຫ້ພວກ
ເຈົ້າໄປຈາກເຂົາ, ແລະ [ກ]ລ້າງຕີນຂອງ
ພວກເຈົ້າແມ່ນແຕ່ດ້ວຍນ້ຳ, ນ້ຳບໍລິສຸດ, ບໍ່
ວ່າໃນຄວາມຮ້ອນ ຫລື ໃນຄວາມໜາວ,
ແລະ ສະແດງປະຈັກພະຍານເຖິງສິ່ງນີ້ຕໍ່
ພຣະບິດາຂອງພວກເຈົ້າ ຊຶ່ງສະຖິດຢູ່ໃນ
ສະຫວັນ, ແລະ ຢ່າກັບຄືນໄປຫາຄົນນັ້ນ
ອີກ.
93 ແລະ ບໍ່ວ່າໃນໝູ່ບ້ານໃດ ຫລື ເມືອງ
ໃດກໍຕາມທີ່ພວກເຈົ້າເຂົ້າໄປ, ຈົ່ງເຮັດແບບ
ດຽວກັນນີ້.
94 ເຖິງຢ່າງໃດກໍຕາມ, ຈົ່ງຊອກຫາຢ່າງ
ພາກພຽນ ແລະ ຢ່າຢັບຢັ້ງ; ແລະ ວິບັດແກ່
ເຮືອນຫລັງນັ້ນ, ຫລື ໝູ່ບ້ານນັ້ນ ຫລື ເມືອງ
ນັ້ນທີ່ປະຕິເສດພວກເຈົ້າ, ຫລື ຖ້ອຍຄຳ
ຂອງພວກເຈົ້າ, ຫລື ປະຈັກພະຍານຂອງ
ພວກເຈົ້າເຖິງເຮົາ.
95 ວິບັດ, ເຮົາ ກ່າວ ອີກ ເທື່ອ ໜຶ່ງ, ແກ່
ເຮືອນຫລັງນັ້ນ, ຫລື ໝູ່ບ້ານນັ້ນ ຫລື ເມືອງ
ນັ້ນທີ່ປະຕິເສດພວກເຈົ້າ, ຫລື ຖ້ອຍຄຳ
ຂອງພວກເຈົ້າ, ຫລື ປະຈັກພະຍານຂອງ
ພວກເຈົ້າເຖິງເຮົາ;
96 ເພາະ ເຮົາ, [ກ]ຜູ້ ຊົງ ລິດ ອຳນາດ ຍິ່ງ
ໃຫຍ່, ໄດ້ ວາງ ມື ຂອງ ເຮົາ ໄວ້ ເທິງ ປະ
ຊາ ຊາດ, ເພື່ອ [ຂ]ຂ້ຽນຕີພວກເຂົາ ເພາະ
[ຄ]ຄວາມຊົ່ວຮ້າຍຂອງພວກເຂົາ.
97 ແລະ ໂຣກລະບາດຈະອອກໄປ, ແລະ
ມັນຈະບໍ່ຖືກເອົາໄປຈາກແຜ່ນດິນໂລກ ຈົນ
ກວ່າເຮົາໄດ້ສຳເລັດວຽກງານຂອງເຮົາເສຍ
ກ່ອນ, ຊຶ່ງຈະຖືກຕັດໃຫ້ [ກ]ສັ້ນລົງໃນຄວາມ
ຊອບທຳ—
98 ຈົນກວ່າທຸກຄົນຈະຮູ້ຈັກເຮົາ, ຜູ້ທີ່
ເຫລືອຢູ່, ແມ່ນແຕ່ຈາກນ້ອຍທີ່ສຸດຫາຍິ່ງ
ໃຫຍ່ທີ່ສຸດ, ແລະ ຈະເຕັມໄປດ້ວຍຄວາມ
ຮູ້ເລື່ອງພຣະຜູ້ເປັນເຈົ້າ, ແລະ ຈະ [ກ]ເຫັນ
ກັບຕາ, ແລະ ຈະເປັ່ງສຽງຂອງພວກເຂົາ,
ແລະ ດ້ວຍສຽງຈະ [ຂ]ຮ້ອງເພງໃໝ່ນີ້ນຳກັນ,
ມີຄວາມວ່າ:

88 *ກ* ມທ 10:40;
ຢຮ 13:20.
*ຂ* ຄພ 84:42.
ຄມພ ທູດ, ເທວະດາ.
90 *ກ* ມທ 10:42;
ມຣກ 9:41.
91 *ກ* ຢຮ 13:35.
92 *ກ* ມທ 10:14;
ລກ 9:5;
ຄພ 60:15.
96 *ກ* ຄມພ ອົງຊົງລິດ
ອຳນາດຍິ່ງໃຫຍ່.
*ຂ* ຄພ 1:13–14.
*ຄ* ຄມພ ຊົ່ວຮ້າຍ,
ຄວາມຊົ່ວຮ້າຍ.
97 *ກ* ມທ 24:22.
98 *ກ* ອຊຢ 52:8.
*ຂ* ພສສ 96:1;
ພນມ 15:3;
ຄພ 25:12; 133:56.
ຄມພ ຮ້ອງ.

99 ພຣະຜູ້ເປັນເຈົ້າໄດ້ນຳຊີໂອນຄືນ
ມາອີກ;
ພຣະຜູ້ເປັນເຈົ້າໄດ້ [ກ]ໄຖ່ຜູ້ຄົນຂອງພຣະ
ອົງ, [ຂ]ອິດສະຣາເອນ,
ຕາມ [ຄ]ການເລືອກແຫ່ງ [ງ]ພຣະຄຸນ,
ຊຶ່ງບັງເກີດຂຶ້ນດ້ວຍສັດທາ
ແລະ [ຈ]ພັນທະສັນຍາຂອງບັນພະບຸລຸດ
ຂອງພວກເຂົາ.
100 ພຣະຜູ້ເປັນເຈົ້າໄດ້ໄຖ່ຜູ້ຄົນຂອງ
ພຣະອົງ;
ແລະ ຊາຕານຖືກ [ກ]ມັດໄວ້ ແລະ ເວລາຈະ
ບໍ່ມີຢູ່ອີກຕໍ່ໄປ.
ພຣະຜູ້ເປັນເຈົ້າໄດ້ເຕົ້າໂຮມທຸກສິ່ງທັງປວງ
ໄວ້ [ຂ]ນຳກັນ.
ພຣະຜູ້ເປັນເຈົ້າໄດ້ນຳ [ຄ]ຊີໂອນລົງມາຈາກ
ເບື້ອງເທິງ.
ພຣະຜູ້ເປັນເຈົ້າໄດ້ [ງ]ນຳຊີໂອນຂຶ້ນມາຈາກ
ເບື້ອງລຸ່ມ.
101 [ກ]ແຜ່ນດິນໂລກໄດ້ເຈັບທ້ອງ ແລະ
ໄດ້ຄອດພະລັງຂອງນາງອອກມາ;
ແລະ ຄວາມຈິງຖືກຈັດຕັ້ງຂຶ້ນໃນອຸທອນ
ຂອງນາງ;
ແລະ ສະຫວັນຍິ້ມໃຫ້ນາງ;
ແລະ ນາງຖືກຫຸ້ມຫໍ່ດ້ວຍ [ຂ]ລັດສະໝີພາບ
ຂອງພຣະເຈົ້າຂອງນາງ;
ເພາະພຣະອົງຢືນຢູ່ໃນທ່າມກາງຜູ້ຄົນຂອງ
ພຣະອົງ.
102 ລັດສະໝີພາບ, ແລະ ກຽດຕິຍົດ,
ແລະ ອຳນາດ, ແລະ ພະລັງ,
ຈົ່ງເປັນຂອງພຣະເຈົ້າຂອງພວກເຮົາ;
ເພາະພຣະອົງເຕັມໄປດ້ວຍ [ກ]ຄວາມ
ເມດຕາ,
ຄວາມຍຸດຕິທຳ, ພຣະຄຸນ, ແລະ ຄວາມຈິງ,
ແລະ [ຂ]ສັນຕິສຸກ,
ຕະຫລອດການ ແລະ ຕະຫລອດໄປ,
ອາແມນ.
103 ແລະ ອີກເທື່ອໜຶ່ງ, ຕາມຈິງ, ຕາມ
ຈິງແລ້ວ, ເຮົາກ່າວກັບພວກເຈົ້າວ່າ, ມັນ
ເປັນສິ່ງຈຳເປັນທີ່ທຸກຄົນຜູ້ອອກໄປປະ
ກາດພຣະກິດຕິຄຸນອັນເປັນນິດຂອງ
ເຮົາ, ວ່າຕາບໃດທີ່ພວກເຂົາມີຄອບຄົວ,
ແລະ ໄດ້ຮັບເງິນເປັນຂອງຂວັນ, ວ່າພວກ
ເຂົາຄວນສົ່ງມັນໄປໃຫ້ຄອບຄົວ ຫລື ໃຊ້
ຈ່າຍມັນເພື່ອຜົນປະໂຫຍດຂອງຄອບ
ຄົວ, ຕາມທີ່ພຣະຜູ້ເປັນເຈົ້າຈະແນະນຳ
ພວກເຂົາ, ເພາະເຮົາເຫັນວ່າມັນເປັນສິ່ງ
ດີດັ່ງນີ້.
104 ແລະ ໃຫ້ຄົນເຫລົ່ານັ້ນທຸກຄົນທີ່
ບໍ່ມີຄອບຄົວ, ຜູ້ໄດ້ຮັບ [ກ]ເງິນ, ສົ່ງມັນໄປ
ໃຫ້ອະທິການໃນຊີໂອນ, ຫລື ໄປໃຫ້ອະທິ
ການໃນລັດໂອໄຮໂອ, ເພື່ອອຸທິດຖວາຍ
ສຳລັບການນຳການເປີດເຜີຍຕ່າງໆອອກ
ມາ ແລະ ເພື່ອການພິມສິ່ງເຫລົ່ານັ້ນ, ແລະ
ເພື່ອສະຖາປະນາຊີໂອນຂຶ້ນ.
105 ແລະ ຖ້າຫາກຄົນໃດຈະເອົາເສື້ອ
ໃຫຍ່ໃຫ້ຄົນໃດຄົນໜຶ່ງໃນບັນດາພວກ
ເຈົ້າ, ຫລື ເອົາໂສ້ງເສື້ອເປັນຊຸດໃຫ້ພວກ
ເຈົ້າ, ໃຫ້ພວກເຈົ້າມອບໂສ້ງເສື້ອຊຸດເກົ່າ

99 *ກ* ພນມ 5:9; ຄພ 43:29.
*ຂ* ຄມພ ອິດສະຣາເອນ.
*ຄ* ຄມພ ເລືອກ, ການເລືອກ.
*ງ* ຄມພ ພຣະຄຸນ.
*ຈ* ຄມພ ພັນທະສັນຍາ ຂອງອັບຣາຮາມ.
100 *ກ* ພນມ 20:2–3; ຄພ 43:31; 45:55; 88:110.
*ຂ* ອຟຊ 1:10; ຄພ 27:13.
*ຄ* ຄພ 45:11–14; ມຊ 7:62–64. ຄມພ ຊີໂອນ.
*ງ* ຄພ 76:102; 88:96.
101 *ກ* ຄມພ ແຜ່ນດິນໂລກ.
*ຂ* ຄມພ ລັດສະໝີພາບ.
102 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
*ຂ* ຄມພ ສະຫງົບ, ຄວາມສະຫງົບ.
104 *ກ* ຄພ 51:8–9, 12–13.

ໃຫ້ [ກ]ຄົນຍາກຄົນ, ແລະ ໄປຕາມທາງຂອງ ພວກເຈົ້າດ້ວຍຄວາມປິຕິຍິນດີ.

106 ແລະ ຖ້າ ຫາກ ຄົນ ໃດ ໃນ ບັນ ດາ ພວກເຈົ້າ ເຂັ້ມແຂງ ໃນ ພຣະວິນຍານ, ກໍ ໃຫ້ເຂົາ ເອົາ [ກ]ຄົນ ທີ່ອ່ອນແອໄປກັບເຂົາ, ເພື່ອວ່າ ເຂົາຈະ ໄດ້ຮັບ ການ ເສີມສ້າງໃນ [ຂ]ຄວາມອ່ອນ ໂຍນທຸກຢ່າງ, ເພື່ອວ່າເຂົາ ຈະກາຍເປັນຄົນເຂັ້ມແຂງຄືກັນ.

107 ສະນັ້ນ, ຈົ່ງເອົາຄົນເຫລົ່ານັ້ນທີ່ໄດ້ ຮັບການແຕ່ງຕັ້ງສູ່ [ກ]ຖານະປະໂລຫິດທີ່ຕ່ຳ ກວ່າໄປກັບພວກເຈົ້າ, ແລະ ສົ່ງພວກເຂົາ ໄປກ່ອນພວກເຈົ້າເພື່ອນັດໝາຍ, ແລະ ເພື່ອຕຽມທາງ, ແລະ ເພື່ອໄປຕາມນັດ ໝາຍທີ່ຕົວພວກເຈົ້າເອງບໍ່ສາມາດໄປ.

108 ຈົ່ງ ເບິ່ງ, ນີ້ຄືວິທີທີ່ອັກຄະສາວົກ ຂອງເຮົາ, ໃນສະໄໝບູຮານ, ໄດ້ສ້າງສາ ສາດສະໜາຈັກຂອງເຮົາໃຫ້ແກ່ເຮົາ.

109 ສະນັ້ນ, ໃຫ້ທຸກຄົນຢືນຢູ່ໃນໜ້າທີ່ ຂອງຕົນເອງ, ແລະ ທຳງານໃນການເອີ້ນ ຂອງຕົນເອງ; ແລະ ບໍ່ໃຫ້ຫົວກ່າວກັບຕີນ ວ່າ ມັນບໍ່ຕ້ອງການຕີນ; ເພາະຖ້າຫາກ ປາດສະຈາກຕີນແລ້ວ ຮ່າງກາຍຈະຢືນຢູ່ ໄດ້ແນວໃດ?

110 ຮ່າງກາຍກໍຕ້ອງການ [ກ]ອະໄວຍະ ວະທຸກສ່ວນຄືກັນ, ເພື່ອວ່າທຸກພາກສ່ວນ ຈະໄດ້ຮັບການເສີມສ້າງນຳກັນ, ເພື່ອວ່າ ລະບົບການຈະດຳເນີນໄປຢ່າງສົມບູນ.

111 ແລະ ຈົ່ງ ເບິ່ງ, [ກ]ມະຫາປະໂລຫິດ ຄວນເດີນທາງ, ແລະ ແອວເດີນຳອີກ, ແລະ [ຂ]ປະໂລຫິດທີ່ຕ່ຳກວ່ານຳອີກ; ແຕ່ [ຄ]ມັກຄະ ນາຍົກ ແລະ [ງ]ຄູສອນ ຄວນຖືກກຳນົດໃຫ້ [ຈ]ດູແລສາດສະໜາຈັກ, ເພື່ອໃຫ້ເປັນຜູ້ປະ ຕິບັດ ສາດສະໜາກິດປະຈຳຢູ່ກັບສາດສະ ໜາຈັກ.

112 ແລະ ອະທິການ, ນີວເອັນ ເຄ ວິດນີ, ຄວນເດີນທາງໄປອ້ອມຮອບນຳອີກ, ແລະ ໃນບັນດາໜ່ວຍຂອງສາດສະໜາຈັກທັງ ໝົດ, ຊອກຫາຄົນຍາກຈົນເພື່ອ [ກ]ປະຕິບັດ ຕໍ່ຄວາມຕ້ອງການຂອງພວກເຂົາ ໂດຍ ການເຮັດໃຫ້ຄົນລ້ຳລວຍ ແລະ ຄົນອວດດີ [ຂ]ຖ່ອມຕົວ.

113 ລາວ ຄວນ ຈ້າງ ຄົນ ໜຶ່ງ ນຳ ອີກ ໃຫ້ ເປັນ [ກ]ຕົວ ແທນເພື່ອດູແລ ແລະ ເຮັດທຸ ລະກິດທາງໂລກແທນລາວ ດັ່ງທີ່ລາວຈະ ແນະນຳ.

114 ເຖິງຢ່າງໃດກໍຕາມ, ໃຫ້ອະທິການ ໄປ ເມືອງນິວຢອກ, ໄປເມືອງອາບານີນຳ ອີກ, ແລະ ໄປເມືອງບອສ໌ຕັນນຳອີກ, ແລະ ເຕືອນຜູ້ຄົນໃນເມືອງເຫລົ່ານັ້ນດ້ວຍສຽງ ຂອງພຣະກິດຕິຄຸນ, ດ້ວຍສຽງອັນດັງ, ເຖິງ [ກ]ຄວາມເປົ່າປ່ຽວ ແລະ ການລົ້ມເລີກຈົນ ໝົດສິ້ນ ຊຶ່ງຄອຍຖ້າພວກເຂົາຢູ່ ຖ້າຫາກ ພວກເຂົາປະຕິເສດ ສິ່ງເຫລົ່ານີ້.

115 ເພາະຖ້າຫາກພວກເຂົາປະຕິເສດ ສິ່ງເຫລົ່ານີ້ ຊົ່ວໂມງແຫ່ງການພິພາກສາ ຂອງພວກເຂົາໃກ້ຈະມາເຖິງແລ້ວ, ແລະ ບ້ານເຮືອນຂອງພວກເຂົາຈະຖືກປະໃຫ້ [ກ]ຮ້າງເປົ່າແກ່ພວກເຂົາ.

---

105 *ກ* ຄມພ ຍາກຈົນ—ຍາກຈົນໃນສິ່ງຂອງ.
106 *ກ* ຄມພ ຜູກມິດ.
*ຂ* ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
107 *ກ* ຄມພ ຖານະປະໂລຫິດແຫ່ງອາໂຣນ.
110 *ກ* 1 ກຣທ 12:12–23.
111 *ກ* ຄມພ ມະຫາປະໂລຫິດ.
*ຂ* ຄມພ ປະໂລຫິດ, ຖານະປະໂລຫິດແຫ່ງອາໂຣນ.
*ຄ* ຄມພ ມັກຄະນາຍົກ.
*ງ* ຄມພ ຄູສອນ, ຖານະປະໂລຫິດແຫ່ງອາໂຣນ.
*ຈ* ຄມພ ຍາມ, ຄົນຍາມ.
112 *ກ* ຄມພ ຄວາມຜາສຸກ.
*ຂ* ຄພ 56:16.
113 *ກ* ຄພ 90:22.
114 *ກ* ຄພ 1:13–14.
115 *ກ* ລກ 13:35.

116 ໃຫ້ພວກເຂົາ [ກ]ໄວ້ວາງໃຈໃນເຮົາ ແລະ ພວກເຂົາຈະບໍ່ຖືກເຮັດໃຫ້ [ຂ]ສັບສົນ; ແລະ [ຄ]ຜົມເສັ້ນໜຶ່ງຈາກຫົວຂອງພວກເຂົາກໍຈະບໍ່ລົ່ນລົງພື້ນດິນຢ່າງບໍ່ຖືກສັງເກດເຫັນ.

117 ແລະ ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າ, ຜູ້ຮັບໃຊ້ທີ່ເຫລືອຢູ່ຂອງເຮົາທັງໝົດ, ໃຫ້ພວກເຈົ້າອອກໄປດັ່ງທີ່ສະພາບການຂອງພວກເຈົ້າຈະອຳນວຍ, ໃນການເອີ້ນຫລາຍຢ່າງຂອງພວກເຈົ້າ, ໄປຫາເມືອງ ແລະ ໝູ່ບ້ານຕ່າງໆທີ່ຍິ່ງໃຫຍ່ ແລະ ສຳຄັນ, ໂດຍກ່າວຕຳນິໂລກໃນຄວາມຊອບທຳເຖິງຄວາມບໍ່ຊອບທຳ ແລະ ການກະທຳທີ່ອະທຳຂອງພວກເຂົາ, ໂດຍການບອກຢ່າງແຈ່ມແຈ້ງ ແລະ ໃຫ້ເຂົ້າໃຈເຖິງຄວາມເປົ່າປ່ຽວຂອງຄວາມໜ້າກຽດຊັງໃນຍຸກສຸດທ້າຍ.

118 ເພາະ, ພຣະຜູ້ເປັນເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ໄດ້ກ່າວກັບພວກເຈົ້າ, ເຮົາຈະ [ກ]ຈີກອານາຈັກຂອງພວກເຂົາ; ເຮົາບໍ່ພຽງແຕ່ຈະ [ຂ]ສັ່ນແຜ່ນດິນໂລກເທົ່ານັ້ນ, ແຕ່ຟ້າສະຫວັນພ້ອມດ້ວຍດວງດາວຈະສັ່ນສະເທືອນນຳອີກ.

119 ເພາະເຮົາ, ພຣະຜູ້ເປັນເຈົ້າ, ໄດ້ຍື່ນມືຂອງເຮົາອອກໄປສະແດງອຳນາດຂອງສະຫວັນ; ພວກເຈົ້າບໍ່ສາມາດເຫັນມັນຕອນນີ້, ແຕ່ບໍ່ດົນພວກເຈົ້າຈະເຫັນມັນ, ແລະ ຮູ້ວ່າເຮົາເປັນຢູ່, ແລະ ວ່າເຮົາຈະ [ກ]ມາ ແລະ [ຂ]ປົກຄອງກັບຜູ້ຄົນຂອງເຮົາ.

120 ເຮົາຄື [ກ]ອາລະຟາ ແລະ ໂອເມຄາ, ເປັນຕົ້ນ ແລະ ທີ່ສຸດ. ອາແມນ

## ພາກທີ 85

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 27 ເດືອນພະຈິກ, 1832. ພາກນີ້ເປັນພາກສ່ວນໜຶ່ງທີ່ເອົາມາຈາກຈົດໝາຍຂອງສາດສະດາ ເຖິງ ວິວລຽມ ດັບບິນຢູ ແຟ້ວສ໌, ຜູ້ໄດ້ອາໄສຢູ່ໃນເມືອງອິນດີເພັນເດັນສ໌, ລັດມີເຊີຣີ. ມັນຕອບຄຳຖາມກ່ຽວກັບໄພ່ພົນຂອງພຣະເຈົ້າຜູ້ໄດ້ຍ້າຍໄປຢູ່ຊີໂອນແຕ່ບໍ່ໄດ້ເຮັດຕາມພຣະບັນຍັດ ທີ່ຈະອຸທິດຖວາຍຊັບສິນຂອງຕົນ ແລະ ສະນັ້ນ ຈຶ່ງບໍ່ໄດ້ຮັບມູນມໍລະດົກຂອງພວກເຂົາຕາມລະບົບທີ່ຈັດຕັ້ງຂຶ້ນໃນສາດສະໜາຈັກ.*

*1–5, ມູນມໍລະດົກໃນຊີໂອນຕ້ອງໄດ້ຮັບຜ່ານການອຸທິດຖວາຍ; 6–12, ຄົນທີ່ມີພະລັງ ແລະ ເຂັ້ມແຂງຈະມອບມູນມໍລະດົກໃນຊີໂອນໃຫ້ແກ່ໄພ່ພົນຂອງພຣະເຈົ້າ.*

1 ມັນເປັນໜ້າທີ່ຂອງສະໝຽນຂອງພຣະຜູ້ເປັນເຈົ້າ, ຜູ້ຊຶ່ງພຣະອົງໄດ້ກຳນົດໄວ້, ທີ່ຈະຮັກສາ ປະຫວັດສາດ, ແລະ [ກ]ບັນທຶກທົ່ວໄປຂອງສາດສະໜາຈັກກ່ຽວກັບທຸກສິ່ງ

116 *ກ* ຄມພ ໄວ້ວາງໃຈ, ຄວາມໄວ້ວາງໃຈ.
*ຂ* ພສສ 22:5; 1 ປຕ 2:6.
*ຄ* ມທ 10:29–31.
118 *ກ* ດນອ 2:44–45.
*ຂ* ຢອ 2:10; ຄພ 43:18; 45:33, 48; 88:87, 90. ຄມພ ເຄື່ອງໝາຍແຫ່ງການເວລາ; ຍຸກສຸດທ້າຍ.
119 *ກ* ຄພ 1:12, 35–36; 29:9–11; 45:59. ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
*ຂ* ຄມພ ພັນປີ.
120 *ກ* ຄມພ ອາລະຟາ ແລະ ໂອເມຄາ.
**85** 1 *ກ* ຄພ 21:1; 47:1; 69:3–6.

ທີ່ເກີດຂຶ້ນໃນຊີໂອນ, ແລະ ກ່ຽວກັບທຸກຄົນ ຜູ້ໄດ້ [ຂ]ອຸທິດຖວາຍຊັບສິນ, ແລະ ໄດ້ຮັບ ມູນມໍລະດົກຢ່າງຖືກຕ້ອງຕາມກົດໝາຍ ຈາກອະທິການ;

2 ແລະ ກ່ຽວກັບຊີວິດນາໆປະການຂອງ ພວກເຂົານຳອີກ, ສັດທາຂອງພວກເຂົາ, ແລະ ວຽກງານ; ແລະ ຄົນທີ່ປະຖິ້ມຄວາມ ເຊື່ອນຳອີກ ຜູ້ໄດ້ປະຖິ້ມຄວາມເຊື່ອຫລັງ ຈາກໄດ້ຮັບມູນມໍລະດົກຂອງພວກເຂົາ ແລ້ວ.

3 ມັນ ເປັນ ສິ່ງ ກົງ ກັນ ຂ້າມ ກັບ ພຣະ ປະສົງ ແລະ ພຣະບັນຍັດຂອງພຣະເຈົ້າທີ່ ຄົນເຫລົ່ານັ້ນຜູ້ບໍ່ໄດ້ຮັບມູນມໍລະດົກຂອງ ພວກເຂົາໂດຍ [ກ]ການອຸທິດຖວາຍ, ສອດ ຄ່ອງກັບກົດຂອງພຣະອົງ, ຊຶ່ງພຣະອົງໄດ້ ປະທານໃຫ້, ເພື່ອວ່າພຣະອົງຈະໄດ້ເກັບ [ຂ]ສ່ວນສິບຈາກຜູ້ຄົນຂອງພຣະອົງ, ເພື່ອ ຕຽມພວກເຂົາໃຫ້ພ້ອມສຳລັບວັນແຫ່ງ [ຄ]ການແກ້ແຄ້ນ ແລະ ການເຜົາໄໝ້, ຈະມີຊື່ ຂອງພວກເຂົາບັນທຶກລົງໄວ້ກັບຜູ້ຄົນຂອງ ພຣະເຈົ້າ.

4 ທັງບໍ່ໃຫ້ບັນທຶກລຳດັບການສືບເຊື້ອ ສາຍຂອງພວກເຂົາໄວ້, ຫລື ບໍ່ໃຫ້ພົບເຫັນ ຢູ່ໃນບັນທຶກໃດໆ ຫລື ໃນປະຫວັດສາດ ຂອງສາດສະໜາຈັກ.

5 ຊື່ຂອງພວກເຂົາຈະບໍ່ມີໃຜພົບເຫັນ, ທັງຊື່ຂອງບັນພະບຸລຸດ, ທັງຊື່ຂອງລູກໆທີ່ມີ ຊຽນໄວ້ຢູ່ໃນ [ກ]ປຶ້ມກົດຂອງພຣະເຈົ້າ, ຈອມ ໂຍທາໄດ້ກ່າວ.

6 ແທ້ຈິງແລ້ວ, [ກ]ສຽງອັນເບົາໆໄດ້ກ່າວ ດັ່ງນີ້, ຊຶ່ງໄດ້ສື່ມຜ່ານ ແລະ [ຂ]ສຽບແທງທຸກ ສິ່ງທັງປວງ, ແລະ ຫລາຍເທື່ອມັນໄດ້ເຮັດ ໃຫ້ກະດູກຂອງຂ້າພະເຈົ້າສັ່ນໃນຂະນະທີ່ ມັນສະແດງໃຫ້ປະຈັກ, ໂດຍກ່າວວ່າ:

7 ແລະ ເຫດການຈະບັງເກີດຂຶ້ນຄື ເຮົາ, ອົງພຣະຜູ້ເປັນເຈົ້າ, ຈະສົ່ງຄົນໜຶ່ງທີ່ມີພະ ລັງ ແລະ ເຂັ້ມແຂງ, ຊຶ່ງຖືໄມ້ຄ້ອນເທົ້າແຫ່ງ ອຳນາດໃນມືຂອງເຂົາ, ຫຸ້ມຫໍ່ດ້ວຍຄວາມ ສະຫວ່າງເປັນອາພອນ, ຜູ້ທີ່ປາກຈະກ່າວ ຖ້ອຍຄຳ, ຖ້ອຍຄຳນິລັນດອນ; ໃນຂະນະ ທີ່ອຸທອນຂອງເຂົາເປັນອ່າງນ້ຳແຫ່ງຄວາມ ຈິງ, ເພື່ອວາງລະບຽບບ້ານຂອງພຣະເຈົ້າ, ແລະ ເພື່ອຈັດການກັບມູນມໍລະດົກເປັນ ແປງໆໃຫ້ໄພ່ພົນຂອງພຣະເຈົ້າ ຜູ້ທີ່ຊື່ຂອງ ພວກເຂົາ, ແລະ ຊື່ຂອງບັນພະບຸລຸດຂອງ ພວກເຂົາ, ແລະ ຊື່ລູກຂອງພວກເຂົາຖືກ ພົບເຫັນຢູ່ໃນປຶ້ມກົດຂອງພຣະເຈົ້າ;

8 ໃນຂະນະທີ່ຊາຍຜູ້ນັ້ນ, ຜູ້ຊຶ່ງຖືກເອີ້ນ ຈາກພຣະເຈົ້າ ແລະ ກຳນົດໄວ້, ຜູ້ຊຶ່ງໄດ້ ຍື່ນມືຂອງເຂົາອອກໄປ ເພື່ອປະຄອງ [ກ]ຫີບ ຂອງພຣະເຈົ້າໄວ້, ຈະລົ້ມລົງໂດຍລູກສອນ ແຫ່ງຄວາມຕາຍ, ເໝືອນດັ່ງຕົ້ນໄມ້ທີ່ຖືກ ບັ່ນລົງໂດຍສາຍຟ້າແມບອັນເຈີດຈ້າ.

9 ແລະ ທຸກຄົນທີ່ບໍ່ໄດ້ຖືກພົບເຫັນວ່າມີ ຊຽນໄວ້ຢູ່ໃນ [ກ]ປຶ້ມແຫ່ງຄວາມຊົງຈຳຈະບໍ່ ພົບມູນມໍລະດົກໃນວັນນັ້ນ, ແຕ່ ພວກເຂົາ ຈະຖືກຕັດເປັນຕ່ອນໆ, ແລະ ຈະກຳນົດ ສ່ວນຂອງພວກເຂົາໄວ້ໃນບັນດາຄົນທີ່ບໍ່ ເຊື່ອ, ບ່ອນທີ່ຈະມີ [ຂ]ການຄວນຄາງ ແລະ ການຂົບແຂ້ວຄຽ້ວຟັນ.

1 ຂ ຄພ 42:30–35.
3 ກ ຄມພ ອຸທິດຖວາຍ, ກົດ ແຫ່ງການອຸທິດຖວາຍ.
ຂ ຄມພ ສ່ວນສິບ, ເງິນສ່ວນສິບ.
ຄ ມລກ 3:10–11, 17; ຄພ 97:25–26.
5 ກ ຄມພ ໜັງສືທະບຽນແຫ່ງຊີວິດ.
6 ກ 1 ກສ 19:11–12; ຮລມ 5:30–31; 3 ນຟ 11:3–7.
ຂ ຮຮ 4:12.
8 ກ 2 ຊມອ 6:6–7; 1 ຂຄ 13:9–10. ຄມພ ຫີບຄຳໝັ້ນສັນຍາ.
9 ກ 3 ນຟ 24:16; ມຊ 6:5–6. ຄມພ ປຶ້ມແຫ່ງຄວາມຊົງຈຳ.
ຂ ຄພ 19:5.

10 ສິ່ງເຫລົ່ານີ້ຂ້າພະເຈົ້າບໍ່ໄດ້ເວົ້າດ້ວຍ
ຕົນເອງ; ສະນັ້ນ, ດັ່ງທີ່ພຣະຜູ້ເປັນເຈົ້າໄດ້
ກ່າວສັນໃດ, ພຣະອົງຈະເຮັດໃຫ້ມັນສຳ
ເລັດຜົນສັນນັ້ນ.
11 ແລະ ຄົນທີ່ເປັນຂອງຖານະປະໂລ
ຫິດສູງ, ຜູ້ທີ່ຊື່ບໍ່ຖືກພົບເຫັນວ່າມີຂຽນໄວ້ຢູ່
ໃນ [ກ]ປຶ້ມກົດ, ຫລື ຖືກພົບເຫັນວ່າໄດ້ [ຂ]ປະ
ຖິ້ມຄວາມເຊື່ອ, ຫລື ໄດ້ຖືກ [ຄ]ຕັດອອກຈາກ
ສາດສະໜາຈັກ, ເຊັ່ນດຽວກັບຄົນທີ່ເປັນ
ຂອງຖານະປະໂລຫິດຕ່ຳກວ່ານຳອີກ, ຫລື
ສະມາຊິກ, ໃນວັນນັ້ນຈະບໍ່ພົບເຫັນມູນມໍ
ລະດົກໃນບັນດາໄພ່ພົນຂອງພຣະຜູ້ສູງ
ສຸດ;
12 ສະນັ້ນ, ມັນຈະເປັນໄປກັບພວກເຂົາ
ດັ່ງທີ່ມັນໄດ້ເປັນໄປກັບລູກໆຂອງປະໂລ
ຫິດ, ຕາມທີ່ຈະພົບເຫັນວ່າມີບັນທຶກໄວ້ຢູ່
ໃນ ບົດທີສອງ, ແລະ ຂໍ້ທີຫົກສິບເອັດ ແລະ
ຫົກສິບສອງ ໃນໜັງສືເອຊະຣາ.

# ພາກທີ 86

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 6 ເດືອນທັນວາ, 1832. ການເປີດເຜີຍນີ້ໄດ້ຮັບໃນຂະນະທີ່ສາດສະດາໄດ້ທົບທວນ ແລະ ຮຽບຮຽງການແປພຣະຄຣິສຕະທຳຄຳພີ.*

*1–7, ພຣະຜູ້ເປັນເຈົ້າໄດ້ບອກຄວາມໝາຍກ່ຽວກັບຄຳອຸປະມາເລື່ອງເຂົ້າເປືອກ ແລະ ເຂົ້ານົກ; 8–11, ພຣະອົງອະທິບາຍພຣະພອນຂອງຖານະປະໂລຫິດສຳລັບຄົນເຫລົ່ານັ້ນທີ່ເປັນທາຍາດຢ່າງຖືກຕ້ອງຕາມກົດໝາຍໃນທາງເນື້ອໜັງ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້ກັບພວກເຈົ້າທັງຫລາຍຜູ້ຮັບ
ໃຊ້ຂອງເຮົາ, ກ່ຽວກັບ [ກ]ຄຳອຸປະມາເລື່ອງ
ເຂົ້າເປືອກ ແລະ ເຂົ້ານົກ:
2 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວ
ວ່າ ທົ່ງຄື ໂລກ, ແລະ ອັກຄະສາວົກຄືຜູ້
ຫວ່ານເມັດພືດ;
3 ແລະ ຫລັງຈາກເຂົາເຈົ້າໄດ້ຫລັບໄປ
ຜູ້ຂົ່ມເຫັງທີ່ຍິ່ງໃຫຍ່ຂອງສາດສະໜາຈັກ,
ຜູ້ປະຖິ້ມຄວາມເຊື່ອ, ໂສເພນີ, ແມ່ນແຕ່
[ກ]ບາບີໂລນ, ທີ່ເຮັດໃຫ້ທຸກປະຊາຊາດດື່ມ
ຈາກຖ້ວຍຂອງນາງ, ຊຶ່ງໃນໃຈຂອງພວກ
ເຂົາ, ສັດຕູ, ແມ່ນແຕ່ຊາຕານ, ນັ່ງຢູ່ເທິງ
ບັນລັງ—ຈົ່ງເບິ່ງ ມັນໄດ້ຫວ່ານເຂົ້ານົກ;
ດັ່ງນັ້ນ, ເຂົ້ານົກຈຶ່ງຫຸ້ມຮັດເຂົ້າເປືອກ ແລະ
ຂັບໄລ່ [ຂ]ສາດສະໜາຈັກເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານ.
4 ແຕ່ ຈົ່ງເບິ່ງ, ໃນ [ກ]ຍຸກສຸດທ້າຍ, ແມ່ນ
ແຕ່ບັດນີ້ ໃນຂະນະທີ່ພຣະຜູ້ເປັນເຈົ້າພວມ
ເລີ່ມນຳພຣະຄຳອອກມາ, ແລະ ຕົ້ນເຂົ້າ
ພວມປົ່ງໃບ ແລະ ຍັງອ່ອນຢູ່—
5 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າ, [ກ]ເຫລົ່າທູດໄດ້ຮ້ອງທູນພຣະ

11 *ກ* ຄມພ ໜັງສືທະບຽນແຫ່ງຊີວິດ.
*ຂ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.
*ຄ* ຄມພ ການຖືກໄລ່ອອກ.
**86** 1 *ກ* ມທ 13:6–43; ຄພ 101:64–67.
3 *ກ* ພນມ 17:1–9. ຄມພ ບາເບນ, ບາບີໂລນ.
*ຂ* ພນມ 12:6, 14.
4 *ກ* ຄມພ ຍຸກສຸດທ້າຍ.
5 *ກ* ຄພ 38:12.

ຜູ້ເປັນເຈົ້າທັງວັນ ແລະ ຄືນ, ຜູ້ພ້ອມແລ້ວ
ແລະ ຄອຍຖ້າທີ່ຈະຖືກສົ່ງອອກໄປ [ຂ]ເກັບ
ກ່ຽວຢູ່ໃນທົ່ງ;
6 ແຕ່ພຣະຜູ້ເປັນເຈົ້າໄດ້ກ່າວກັບພວກ
ເຂົາວ່າ ບໍ່ໃຫ້ຫລົກເຂົ້ານົກ ໃນຂະນະໃບ
ເຂົ້າຍັງອ່ອນຢູ່ (ເພາະຕາມຄວາມຈິງແລ້ວ
ສັດທາຂອງພວກເຈົ້າຍັງອ່ອນແອຢູ່), ຖ້າ
ບໍ່ດັ່ງນັ້ນພວກເຈົ້າຈະທຳລາຍເຂົ້າເປືອກ
ຄືກັນ.
7 ສະນັ້ນ, ຈົ່ງໃຫ້ເຂົ້າເປືອກ ແລະ ເຂົ້າ
ນົກເຕີບໂຕຂຶ້ນນຳກັນ ຈົນກວ່າເຖິງເວລາ
ທີ່ມັນສຸກເຕັມທີ່; ຈາກນັ້ນ ກ່ອນອື່ນໝົດ
ໃຫ້ພວກເຈົ້າເຕົ້າໂຮມເອົາເຂົ້າເປືອກ
ຈາກທ່າມກາງເຂົ້ານົກ, ແລະ ຫລັງຈາກ
ໄດ້ເຕົ້າໂຮມເອົາເຂົ້າເປືອກແລ້ວ, ຈົ່ງເບິ່ງ
ແລະ ເບິ່ງແມ, ເຂົ້ານົກຈະຖືກເຕົ້າໂຮມໄວ້
ເປັນມັດໆ, ແລະ ທົ່ງເຫລືອຢູ່ເພື່ອຈະຖືກ
ເຜົາ.
8 ສະນັ້ນ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້
ກັບພວກເຈົ້າ, ກັບຜູ້ທີ່ [ກ]ຖານະປະໂລຫິດ
ໄດ້ສືບຕໍ່ດຳລົງຢູ່ຜ່ານທາຍາດຂອງບັນພະ
ບຸລຸດຂອງພວກເຈົ້າ—
9 ເພາະພວກເຈົ້າເປັນ [ກ]ທາຍາດທີ່ຖືກ
ຕ້ອງຕາມກົດໝາຍ, ຕາມທາງເນື້ອໜັງ,
ແລະ ໄດ້ຖືກ [ຂ]ເຊື່ອງໄວ້ຈາກໂລກກັບພຣະ
ຄຣິດໃນພຣະເຈົ້າ—
10 ສະນັ້ນ ຊີວິດຂອງພວກເຈົ້າ ແລະ
ຖານະປະໂລຫິດຍັງສືບຕໍ່ດຳລົງຢູ່, ແລະ
ຈຳເປັນຕ້ອງສືບຕໍ່ດຳລົງຢູ່ໂດຍຜ່ານພວກ
ເຈົ້າ ແລະ ທາຍາດຂອງພວກເຈົ້າ ຈົນກວ່າ
ຈະເຖິງ [ກ]ການຟື້ນຟູຂອງທຸກສິ່ງທັງປວງ
ຊຶ່ງເວົ້າໄວ້ໂດຍປາກຂອງສາດສະດາຜູ້ບໍລິ
ສຸດທຸກຄົນນັບແຕ່ການເລີ່ມຕົ້ນຂອງໂລກ.
11 ສະນັ້ນ, ພວກເຈົ້າເປັນສຸກແລ້ວ ຖ້າ
ຫາກພວກເຈົ້າສືບຕໍ່ຢູ່ໃນຄຸນຄວາມດີຂອງ
ເຮົາ, ທີ່ເປັນ [ກ]ຄວາມສະຫວ່າງແກ່ຄົນຕ່າງ
ຊາດ, ແລະ ໂດຍຜ່ານຖານະປະໂລຫິດນີ້,
ເປັນພຣະຜູ້ຊ່ວຍໃຫ້ລອດແກ່ຜູ້ຄົນຂອງ
ເຮົາ [ຂ]ອິດສະຣາເອນ. ພຣະຜູ້ເປັນເຈົ້າໄດ້
ກ່າວເລື່ອງນີ້. ອາແມນ.

# ພາກທີ 87

*ການເປີດເຜີຍ ແລະ ການທຳນາຍກ່ຽວກັບສົງຄາມ, ທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ທີ່ ຫລື ໃກ້ ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 25 ເດືອນທັນວາ, 1832. ໃນເວລານີ້ ມີການຜິດຖຽງກັນ ຢູ່ໃນສະຫະລັດ ອາເມຣິກາ ເລື່ອງຄວາມເປັນຂ້າທາດ ແລະ ລັດຊ້າວຄາໂຣໄລນາ ບໍ່ຍອມຈ່າຍຄ່າພາສີໃຫ້ແກ່ລັດຖະບານກາງ. ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ "ບັນຫາຂອງປະຊາຊາດ" ເລີ່ມຕົ້ນ "ແຈ່ມແຈ້ງ" ຕໍ່ສາດສະດາ "ຫລາຍກວ່າທີ່ຜ່ານມາ ນັບຕັ້ງແຕ່ສາດສະໜາຈັກ ໄດ້ເລີ່ມຕົ້ນອອກມາຈາກຖິ່ນແຫ້ງແລ້ງກັນດານ."*

---

5 *ຂ* ຄມພ ເກັບກ່ຽວ.
8 *ກ* ຄພ 113:8.
ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
9 *ກ* ອຣຣ 2:9–11.
ຄມພ ພັນທະສັນຍາຂອງອັບຣາຮາມ.
*ຂ* ອຊຢ 49:2–3.
10 *ກ* ກຈກ 3:19–21.
ຄມພ ການຟື້ນຟູພຣະກິດຕິຄຸນ.
11 *ກ* ອຊຢ 49:6.
*ຂ* ຄພ 109:59–67.

*1–4, ສົງຄາມ ໄດ້ ຖືກ ບອກ ໄວ້ ລ່ວງ ໜ້າ ລະຫວ່າງລັດທາງເໜືອກັບລັດທາງໃຕ້; 5–8, ໄພອັນໃຫຍ່ຫລວງຈະຕົກໃສ່ເທິງຜູ້ອາໄສທັງປວງຂອງແຜ່ນດິນໂລກ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກ່ຽວກັບສົງຄາມຕ່າງໆທີ່ຈະເກີດຂຶ້ນໃນບໍ່ດົນ, ໂດຍເລີ່ມຕົ້ນຈາກການກະບົດຂອງ [ກ]ລັດຊ້າວຄາໂຣໄລນາ, ຊຶ່ງໃນທີ່ສຸດຈະສິ້ນສຸດລົງດ້ວຍຄວາມຕາຍ ແລະ ຄວາມທຸກທໍລະມານຂອງຄົນຢ່າງຫລວງຫລາຍ;

2 ແລະ ເວລາຈະມາເຖິງ ເມື່ອ [ກ]ສົງຄາມຈະ ລຸກລາມໄປເຖິງປະຊາ ຊາດທັງປວງ, ໂດຍເລີ່ມຕົ້ນຈາກບ່ອນນີ້.

3 ເພາະຈົ່ງ ເບິ່ງ, ລັດທາງໃຕ້ຈະແຍກຕົນເອງອອກຈາກລັດທາງເໜືອ, ແລະ ລັດທາງໃຕ້ຈະເອີ້ນຫາປະຊາຊາດອື່ນ, ແມ່ນແຕ່ເອີ້ນຫາອັງກິດ, ຕາມທີ່ມັນຖືກເອີ້ນ, ແລະ ພວກເຂົາກໍຈະເອີ້ນຫາປະຊາຊາດອື່ນໆນຳອີກ, ເພື່ອປົກປ້ອງຕົນເອງຈາກປະຊາຊາດອື່ນໆ; ແລະ ຈາກນັ້ນ [ກ]ສົງຄາມຈະລຸກລາມໄປເຖິງທຸກປະຊາຊາດທັງປວງ.

4 ແລະ ເຫດການຈະບັງເກີດຂຶ້ນຄື ຫລັງຈາກຫລາຍວັນ, ຜູ້ເປັນ [ກ]ຂ້າທາດຈະລຸກຂຶ້ນ ຕໍ່ ຕ້ານນາຍຂອງຕົນ, ຜູ້ ຈະ ຖືກ ເຕົ້າໂຮມກຳລັງ ແລະ ຝຶກສຳລັບການສູ້ຮົບ.

5 ແລະ ເຫດການຈະບັງເກີດຂຶ້ນນຳອີກຄື ພວກທີ່ເຫລືອຢູ່ໃນແຜ່ນດິນ ຈະເຕົ້າໂຮມກຳລັງເຂົ້າກັນ, ແລະ ຈະໂມໂຫຮ້າຍຢ່າງໜັກ, ແລະ ຈະລົບກວນຄົນຕ່າງຊາດດ້ວຍຄວາມເດືອດຮ້ອນຢ່າງສາຫັດ.

6 ແລະ ດັ່ງນັ້ນ, ດ້ວຍດາບ ແລະ ດ້ວຍການນອງເລືອດ ຜູ້ອາໄສຂອງແຜ່ນດິນໂລກຈະ [ກ]ຄວນຄາງ; ແລະ ດ້ວຍ [ຂ]ຄວາມອຶດຢາກ, ແລະ ໂຣກລະບາດ, ແລະ ແຜ່ນດິນໄຫວ, ແລະ ຟ້າຮ້ອງໃນຟ້າສະຫວັນ, ແລະ ຟ້າແມບເຫລື້ອມອັນເຈີດຈ້ານຳອີກ, ຈະເຮັດໃຫ້ຜູ້ອາໄສຂອງແຜ່ນດິນໂລກຮູ້ສຶກເຖິງພຣະພິໂລດ, ແລະ ຄວາມເຄືອງແຄ້ນ, ແລະ ພຣະຫັດທີ່ [ຄ]ຕີສອນຂອງພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່, ຈົນກວ່າການທຳລາຍທີ່ໄດ້ກຳນົດໄວ້ແລ້ວຈະເຮັດໃຫ້ປະຊາຊາດທັງປວງ [ງ]ສູນສິ້ນໄປ;

7 ເພື່ອສຽງຮ້ອງໄຫ້ຂອງໄພ່ພົນຂອງພຣະເຈົ້າ, ແລະ ຂອງ [ກ]ເລືອດຂອງໄພ່ພົນຂອງພຣະເຈົ້າ, ຈະຢຸດຂຶ້ນມາເຖິງພຣະກັນຂອງພຣະຜູ້ເປັນເຈົ້າແຫ່ງ [ຂ]ຊາບາໂອດ, ຈາກແຜ່ນດິນໂລກ, ເພື່ອແກ້ແຄ້ນສັດຕູຂອງພວກເຂົາ.

8 ດັ່ງນັ້ນ, ເຈົ້າຈົ່ງ [ກ]ຢືນຢູ່ໃນສະຖານທີ່ສັກສິດ, ແລະ ບໍ່ຫວັ່ນໄຫວ, ຈົນກວ່າວັນຂອງພຣະຜູ້ເປັນເຈົ້າມາເຖິງ; ເພາະຈົ່ງເບິ່ງ, ມັນມາເຖິງ [ຂ]ຢ່າງໄວ, ພຣະຜູ້ເປັນເຈົ້າໄດ້ກ່າວ. ອາແມນ.

---

**87** 1*ກ* ຄພ 130:12–13.
2*ກ* ຢອ 3:9–16; ມທ 24:6–7; ຄພ 45:26, 63; 63:33.
3*ກ* ຄພ 45:68–69.
4*ກ* ຄພ 134:12.
6*ກ* ຄພ 29:14–21; 45:49.
*ຂ* ຈສ—ມ 1:29.
*ຄ* ຄມພ ຕີສອນ, ການຕີສອນ.
*ງ* ຄມພ ໂລກ—ທີ່ສຸດຂອງໂລກ.
7*ກ* ອທ 8:22–24.
*ຂ* ຢກບ 5:4; ຄພ 88:2; 95:7.
8*ກ* ມທ 24:15; ຄພ 45:32; 101:21–22.
*ຂ* ພນມ 3:11.

# ພາກທີ 88

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 27 ແລະ 28 ເດືອນທັນວາ, 1832, ແລະ ວັນທີ 3 ເດືອນມັງກອນ, 1833. ສາດສະດາໄດ້ລະບຸການເປີດເຜີຍນີ້ວ່າເປັນ "'ໃບໝາກກອກ' . . . ເດັດອອກມາຈາກຕົ້ນໄມ້ຂອງເມືອງສຸຂະເສີມ, ເປັນຂ່າວສານແຫ່ງສັນຕິສຸກຂອງພຣະຜູ້ເປັນເຈົ້າແກ່ພວກເຮົາ." ການເປີດເຜີຍໄດ້ຖືກມອບໃຫ້ຕອນກຸ່ມມະຫາປະໂລຫິດໄດ້ອະທິຖານຫລັງຈາກກອງປະຊຸມ "ແຍກກັນຢູ່ ແລະ ເອີ້ນພຣະຜູ້ເປັນເຈົ້າ ເພື່ອຂໍໃຫ້ພຣະອົງເປີດເຜີຍພຣະປະສົງຂອງພຣະອົງແກ່ເຮົາ ກ່ຽວກັບການເສີມສ້າງຊີໂອນ."*

*1–5, ໄພ່ພົນທີ່ຊື່ສັດຂອງພຣະເຈົ້າໄດ້ຮັບພຣະຜູ້ປອບໂຍນອົງນັ້ນ, ຊຶ່ງເປັນຄຳສັນຍາຂອງຊີວິດນິລັນດອນ; 6–13, ທຸກສິ່ງທັງປວງຖືກຄວບຄຸມ ແລະ ປົກຄອງໂດຍຄວາມສະຫວ່າງຂອງພຣະຄຣິດ; 14–16, ການຟື້ນຄືນຊີວິດມາເຖິງຜ່ານທາງການໄຖ່; 17–31, ການເຊື່ອຟັງກົດຂອງໂລກຊັ້ນສູງ, ໂລກຊັ້ນກາງ, ຫລື ໂລກຊັ້ນຕ່ຳຈະຕຽມມະນຸດສຳລັບອານາຈັກ ແລະ ລັດສະໝີພາບເຫລົ່ານັ້ນຕາມລຳດັບ; 32–35, ຄົນທີ່ຢູ່ໃນບາບກໍຈະຍັງສົກກະປົກຢູ່ຄືເກົ່າ; 36–41, ອານາຈັກທັງປວງຈະຖືກປົກຄອງດ້ວຍກົດ; 42–45, ພຣະເຈົ້າໄດ້ປະທານກົດສຳລັບທຸກສິ່ງທັງປວງ; 46–50, ມະນຸດຈະເຂົ້າໃຈແມ່ນແຕ່ພຣະເຈົ້າ; 51–61, ຄຳອຸປະມາເລື່ອງຊາຍທີ່ສົ່ງຜູ້ຮັບໃຊ້ຂອງຕົນໄປເຮັດວຽກຢູ່ໃນທົ່ງ ແລະ ໄດ້ໄປຢ້ຽມຢາມພວກເຂົາແຕ່ລະຄົນ; 62–73, ຈົ່ງເຂົ້າໃກ້ພຣະຜູ້ເປັນເຈົ້າ, ແລະ ທ່ານຈະເຫັນພຣະພັກຂອງພຣະອົງ; 74–80, ຈົ່ງຊຳລະຕົນໃຫ້ບໍລິສຸດ ແລະ ສິດສອນຄຳສອນຂອງອານາຈັກໃຫ້ກັນແລະກັນ; 81–85, ທຸກຄົນທີ່ໄດ້ຖືກເຕືອນ ຄວນ ເຕືອນເພື່ອນບ້ານຂອງຕົນ; 86–94, ເຄື່ອງໝາຍ, ຄວາມປັ່ນປ່ວນຂອງດິນຟ້າອາກາດ, ແລະ ເຫລົ່າທູດ ຈັດຕຽມທາງສຳລັບການສະເດັດມາຂອງພຣະຜູ້ເປັນເຈົ້າ; 95–102, ເຫລົ່າທູດເປົ່າແກເອີ້ນຄົນຕາຍຕາມລຳດັບຂອງພວກເຂົາ; 103–116, ເຫລົ່າທູດເປົ່າແກປະກາດການຟື້ນຟູພຣະກິດຕິຄຸນ, ການຫລົ້ມຈົມຂອງບາບີໂລນ, ແລະ ການສູ້ຮົບຂອງພຣະເຈົ້າອົງຍິ່ງໃຫຍ່; 117–126, ຈົ່ງສະແຫວງຫາການຮຽນຮູ້, ຈົ່ງສະຖາປະນາບ້ານຂອງພຣະເຈົ້າ (ພຣະວິຫານ), ແລະ ຫຸ້ມຫໍ່ຕົນເອງດ້ວຍພັນທະແຫ່ງຄວາມໃຈບຸນ; 127–141, ລະບຽບຂອງໂຮງຮຽນຂອງສາດສະດາໄດ້ຖືກອະທິບາຍໄວ້, ລວມທັງພິທີການລ້າງຕີນ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບພວກເຈົ້າ ຜູ້ໄດ້ມາຮ່ວມຊຸມນຸມນຳກັນເພື່ອຮັບພຣະປະສົງຂອງພຣະອົງກ່ຽວກັບພວກເຈົ້າ:

2 ຈົ່ງເບິ່ງ, ນີ້ເປັນສິ່ງພໍພຣະໄທແກ່ພຣະຜູ້ເປັນເຈົ້າຂອງພວກເຈົ້າ, ແລະ ເຫລົ່າທູດ [ກ]ປິຕິຍິນດີໃນຕົວພວກເຈົ້າ; ການຖວາຍ[ຂ]ທານດ້ວຍຄຳອະທິຖານຂອງພວກເຈົ້າໄດ້ຂຶ້ນມາເຖິງພຣະກັນຂອງພຣະຜູ້ເປັນເຈົ້າ

---

**88** 2 *ກ* ລກ 15:10.
*ຂ* ກຈກ 10:1–4. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

ແຫ່ງ [ຄ]ຊາບາໂອດ, ແລະ ໄດ້ຖືກບັນທຶກໄວ້ຢູ່ໃນ [ງ]ປຶ້ມລາຍຊື່ຂອງຜູ້ທີ່ໄດ້ຮັບການຊຳລະໃຫ້ບໍລິສຸດ, ແມ່ນແຕ່ຄົນເຫລົ່ານັ້ນຂອງໂລກຊັ້ນສູງ.

3 ດັ່ງນັ້ນ, ບັດນີ້ ເຮົາຈຶ່ງໄດ້ສົ່ງ [ກ]ພຣະຜູ້ປອບໂຍນອົງໜຶ່ງມາໃຫ້ພວກເຈົ້າ, ແມ່ນແຕ່ມາໃຫ້ພວກເຈົ້າ ເພື່ອນທັງຫລາຍຂອງເຮົາ, ເພື່ອພຣະອົງຈະໄດ້ສະຖິດຢູ່ໃນຫົວໃຈຂອງພວກເຈົ້າ, ແມ່ນແຕ່ [ຂ]ພຣະວິນຍານສັກສິດແຫ່ງຄຳສັນຍາ; ຊຶ່ງເປັນພຣະຜູ້ປອບໂຍນອົງດຽວກັນນັ້ນ ທີ່ເຮົາໄດ້ສັນຍາກັບສານຸສິດຂອງເຮົາ, ດັ່ງທີ່ມີບັນທຶກໄວ້ຢູ່ໃນພຣະທຳໂຢຮັນ.

4 ພຣະຜູ້ປອບໂຍນອົງນີ້ຄືຄຳສັນຍາແຫ່ງ [ກ]ຊີວິດນິລັນດອນ ທີ່ເຮົາມອບໃຫ້ພວກເຈົ້າ, ແມ່ນແຕ່ [ຂ]ລັດສະໝີພາບ ຂອງອານາຈັກຊັ້ນສູງ;

5 ຊຶ່ງລັດສະໝີພາບນັ້ນຄືຂອງສາດສະໜາຈັກຂອງ [ກ]ພຣະບຸດຫົວປີ, ແມ່ນແຕ່ຂອງພຣະເຈົ້າ, ຜູ້ສັກສິດເໜືອກວ່າທຸກສິ່ງທັງປວງ, ຜ່ານທາງພຣະເຢຊູຄຣິດ ພຣະບຸດຂອງພຣະອົງ—

6 [ກ]ພຣະອົງຜູ້ໄດ້ສະເດັດຂຶ້ນເບື້ອງບົນ, ດັ່ງທີ່ພຣະອົງໄດ້ [ຂ]ສະເດັດລົງຕ່ຳກວ່າທຸກສິ່ງ, ໃນການນັ້ນພຣະອົງຈຶ່ງໄດ້ [ຄ]ເຂົ້າໃຈທຸກສິ່ງທັງປວງ, ເພື່ອວ່າພຣະອົງຈະໄດ້ຢູ່ໃນທຸກສິ່ງທັງປວງ ແລະ ຜ່ານທຸກສິ່ງທັງປວງ, [ງ]ຄວາມສະຫວ່າງແຫ່ງຄວາມຈິງ;

7 ຊຶ່ງຄວາມຈິງນີ້ສ່ອງແສງ. ນີ້ຄື [ກ]ຄວາມສະຫວ່າງຂອງພຣະຄຣິດ. ດັ່ງທີ່ພຣະອົງຢູ່ໃນດວງອາທິດນຳອີກ, ແລະ ເປັນຄວາມສະຫວ່າງຂອງດວງອາທິດ, ແລະ ເປັນພະລັງຂອງມັນ ຊຶ່ງໂດຍພະລັງນັ້ນດວງອາທິດໄດ້ຖືກ [ຂ]ສ້າງຂຶ້ນ.

8 ດັ່ງທີ່ພຣະອົງຢູ່ໃນດວງເດືອນນຳອີກ, ແລະ ເປັນຄວາມສະຫວ່າງຂອງດວງເດືອນ, ແລະ ເປັນພະລັງຂອງມັນ ຊຶ່ງໂດຍພະລັງນັ້ນດວງເດືອນໄດ້ຖືກສ້າງຂຶ້ນ;

9 ພຣະອົງກໍເປັນຄວາມສະຫວ່າງຂອງໝູ່ດວງດາວຄືກັນ, ແລະ ເປັນພະລັງຂອງມັນ ຊຶ່ງໂດຍພະລັງນັ້ນດວງດາວໄດ້ຖືກສ້າງຂຶ້ນ;

10 ແລະ ແຜ່ນດິນໂລກນຳອີກ, ແລະ ພະລັງຂອງມັນ, ແມ່ນແຕ່ແຜ່ນດິນໂລກ ຊຶ່ງເທິງນັ້ນພວກເຈົ້າໄດ້ [ກ]ຢືນຢູ່.

11 ແລະ ຄວາມສະຫວ່າງຊຶ່ງສ່ອງແສງ, ຊຶ່ງໃຫ້ຄວາມສະຫວ່າງແກ່ພວກເຈົ້າ, ມາເຖິງຜ່ານພຣະອົງຜູ້ເຮັດໃຫ້ດວງຕາຂອງພວກເຈົ້າແຈ້ງສະຫວ່າງ, ຊຶ່ງເປັນຄວາມສະຫວ່າງອັນດຽວກັນນັ້ນທີ່ໃຫ້ຊີວິດຊີວາແກ່ [ກ]ຄວາມເຂົ້າໃຈຂອງພວກເຈົ້າ.

12 ຊຶ່ງ [ກ]ຄວາມສະຫວ່າງນັ້ນສ່ອງແສງອອກມາຈາກທີ່ປະທັບຂອງພຣະເຈົ້າ ເພື່ອ [ຂ]ຂະຫຍາຍອອກໄປທົ່ວທຸກແຫ່ງຫົນ—

---

2 ຄ ຢກບ 5:4;
ຄພ 95:7.
ງ ຄມພ ໜັງສືທະບຽນແຫ່ງຊີວິດ.
3 ກ ຢຮ 14:16.
ຂ ຄພ 76:53.
ຄມພ ພຣະວິນຍານສັກສິດແຫ່ງຄຳສັນຍາ.
4 ກ ຄພ 14:7.
ຂ ຄມພ ລັດສະໝີພາບຂອງຊັ້ນສູງ.
5 ກ ຄມພ ລູກກົກ.
6 ກ ຄມພ ພຣະເຢຊູຄຣິດ.
ຂ ຄພ 122:8.
ຄມພ ຊົດໃຊ້, ການຊົດໃຊ້.
ຄ ຄມພ ຮອບຮູ້ທຸກຢ່າງ.
ງ ຄພ 93:2, 8–39.
ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ;
ຈິງ, ຄວາມຈິງ.
7 ກ ມຣນ 7:15–19;
ຄພ 84:45.
ຂ ປຖກ 1:16.
ຄມພ ສ້າງ, ການສ້າງ.
10 ກ ມຊ 2:1.
11 ກ ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
12 ກ ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
ຂ ຢມຢ 23:24.

13 ຄວາມສະຫວ່າງຊຶ່ງຢູ່ໃນ [ກ]ທຸກສິ່ງທັງ
ປວງ, ຊຶ່ງໃຫ້ [ຂ]ຊີວິດແກ່ທຸກສິ່ງທັງປວງ,
ຊຶ່ງເປັນ [ຄ]ກົດທີ່ທຸກສິ່ງທັງປວງຖືກປົກຄອງ
ໂດຍກົດນັ້ນ, ແມ່ນແຕ່ອຳນາດຂອງພຣະ
ເຈົ້າຜູ້ປະທັບຢູ່ເທິງພຣະບັນລັງຂອງພຣະ
ອົງ, ຜູ້ຢູ່ໃນຊວງອົກຂອງຊົ່ວນິລັນດອນ, ຜູ້
ຢູ່ໃນທ່າມກາງຂອງທຸກສິ່ງທັງປວງ.
14 ບັດນີ້, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ໂດຍຜ່ານ [ກ]ການໄຖ່ຊຶ່ງ
ເຮັດເພື່ອພວກເຈົ້າ ມັນຈຶ່ງໄດ້ເຮັດໃຫ້ເກີດ
ການຟື້ນຄືນຊີວິດຈາກບັນດາຄົນຕາຍ.
15 ແລະ [ກ]ວິນຍານກັບ [ຂ]ຮ່າງກາຍເປັນ
[ຄ]ຈິດວິນຍານຂອງມະນຸດ.
16 ແລະ [ກ]ການຟື້ນຄືນຊີວິດຈາກບັນດາ
ຄົນຕາຍຄືການໄຖ່ຈິດວິນຍານ.
17 ແລະ ການໄຖ່ຈິດວິນຍານເກີດຂຶ້ນ
ຜ່ານພຣະອົງ ທີ່ເຮັດໃຫ້ທຸກສິ່ງທັງປວງມີຊີ
ວິດຊີວາ, ຊຶ່ງໃນຊວງອົກຂອງພຣະອົງມີຄຳ
ສັ່ງໄວ້ວ່າ [ກ]ຄົນຍາກຈົນ ແລະ [ຂ]ຄົນອ່ອນ
ໂຍນຂອງ [ຄ]ແຜ່ນດິນໂລກຈະໄດ້ຮັບມັນ
ເປັນມູນມໍລະດົກ.
18 ສະນັ້ນ, ມັນຈຳເປັນຕ້ອງຖືກຊຳລະ
ໃຫ້ບໍລິສຸດຈາກຄວາມບໍ່ຊອບທຳທຸກຢ່າງ,
ເພື່ອມັນຈະໄດ້ຖືກຕຽມໄວ້ສຳລັບລັດສະໝີ
ພາບຂອງ [ກ]ຊັ້ນສູງ;
19 ເພາະຫລັງຈາກມັນໄດ້ເຮັດໃຫ້ຈຸດ
ປະສົງຂອງການສ້າງຂອງມັນສຳເລັດຄົບ
ຖ້ວນແລ້ວ, ມັນຈະໄດ້ຮັບການສວມມົງກຸດ
ດ້ວຍ [ກ]ລັດສະໝີພາບ, ແມ່ນແຕ່ຢູ່ຕໍ່ໜ້າທີ່
ປະທັບຂອງພຣະເຈົ້າອົງເປັນພຣະບິດາ;
20 ເພື່ອຮ່າງກາຍຂອງຜູ້ທີ່ເປັນຂອງ
ອານາຈັກຊັ້ນສູງ ຈະໄດ້ [ກ]ຄອບຄອງມັນ
ຕະຫລອດການ ແລະ ຕະຫລອດໄປ;
ເພາະ, ເພື່ອ [ຂ]ເຈດຕະນານີ້ມັນຈຶ່ງໄດ້ຖືກ
ເຮັດ ແລະ ສ້າງຂຶ້ນ, ແລະ ເພື່ອເຈດຕະນາ
ນີ້ມັນຈຶ່ງໄດ້ຮັບ [ຄ]ການຊຳລະໃຫ້ບໍລິສຸດ.
21 ແລະ ຄົນທີ່ບໍ່ໄດ້ຮັບການຊຳລະໃຫ້ບໍ
ລິສຸດ ໂດຍຜ່ານກົດຊຶ່ງເຮົາໄດ້ປະທານໃຫ້
ແກ່ພວກເຈົ້າ, ແມ່ນແຕ່ກົດຂອງພຣະຄຣິດ,
ຕ້ອງໄດ້ຮັບອານາຈັກອື່ນເປັນມູນມໍລະດົກ,
ແມ່ນແຕ່ອານາຈັກຊັ້ນກາງ, ຫລື ວ່າອານາ
ຈັກຊັ້ນຕ່ຳ.
22 ເພາະຄົນທີ່ບໍ່ສາມາດປະຕິບັດຕາມ
[ກ]ກົດຂອງອານາຈັກຊັ້ນສູງ ຈະທົນກັບລັດ
ສະໝີພາບຂອງອານາຈັກຊັ້ນສູງບໍ່ໄດ້.
23 ແລະ ຄົນທີ່ບໍ່ສາມາດປະຕິບັດຕາມ
ກົດຂອງອານາຈັກຊັ້ນກາງ ຈະທົນກັບລັດ
ສະໝີພາບຂອງ [ກ]ຊັ້ນກາງບໍ່ໄດ້.
24 ແລະ ຄົນທີ່ບໍ່ສາມາດປະຕິບັດຕາມ
ກົດຂອງອານາຈັກຊັ້ນຕ່ຳ ຈະທົນກັບລັດ
ສະໝີພາບຂອງ [ກ]ຊັ້ນຕ່ຳບໍ່ໄດ້; ສະນັ້ນເຂົາ
ຈຶ່ງບໍ່ເໝາະສົມກັບລັດສະໝີພາບຂອງອາ

13 ກ ກລຊ 1:16–17.
ຂ ພບຍ 30:20; ຄພ 10:70.
ຄ ໂຢບ 38;
ຄພ 88:36–38.
ຄມພ ກົດ.
14 ກ ຄມພ ຊົດໃຊ້, ການຊົດໃຊ້;
ແຜນແຫ່ງການໄຖ່.
15 ກ ຄມພ ມະນຸດ—ມະນຸດ,
ລູກທາງວິນຍານຂອງພຣະ
ບິດາເທິງສະຫວັນ;
ວິນຍານ.
ຂ ຄມພ ຮ່າງກາຍ.
ຄ ປຖກ 2:7.
ຄມພ ຈິດວິນຍານ.
16 ກ ແອວ 11:42.
ຄມພ ການຟື້ນຄືນພຣະ
ຊົນ, ການຟື້ນຄືນຊີວິດ.
17 ກ ຄມພ ຍາກຈົນ.
ຂ ຄມພ ອ່ອນໂຍນ,
ຄວາມອ່ອນໂຍນ.
ຄ ຄມພ ແຜ່ນດິນໂລກ—
ພາວະສຸດທ້າຍຂອງ
ແຜ່ນດິນໂລກ.
18 ກ ຄມພ ລັດສະໝີພາບ
ຂອງຊັ້ນສູງ.
19 ກ ຄພ 130:7–9.
20 ກ ຄພ 38:20.
ຂ ມຊ 1:39.
ຄມພ ມະນຸດ—ມະນຸດ,
ສັກກະຍະພາບທີ່ຈະ
ກາຍເປັນເໝືອນດັ່ງພຣະ
ບິດາເທິງສະຫວັນ.
ຄ ຄມພ ຊຳລະໃຫ້ບໍລິສຸດ,
ການຊຳລະໃຫ້ບໍລິສຸດ.
22 ກ ຄພ 105:5.
23 ກ ຄມພ ລັດສະໝີພາບ
ຂອງຊັ້ນກາງ.
24 ກ ຄມພ ລັດສະໝີພາບ
ຂອງຊັ້ນຕ່ຳ.

ນາຈັກ. ສະນັ້ນ ເຂົາຕ້ອງທົນກັບອານາຈັກ
ຊຶ່ງບໍ່ແມ່ນອານາຈັກທີ່ມີລັດສະໝີພາບ.
25 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ [ກ]ແຜ່ນດິນ
ໂລກປະຕິບັດຕາມກົດຂອງອານາຈັກຊັ້ນ
ສູງ, ເພາະມັນເຮັດໃຫ້ຈຸດປະສົງຂອງການ
ສ້າງຂອງມັນສຳເລັດຄົບຖ້ວນ, ແລະ ບໍ່
ລ່ວງລະເມີດກົດ—
26 ດັ່ງ ນັ້ນ, ມັນ ຈຶ່ງ ຈະ ໄດ້ ຮັບ [ກ]ການ
ຊຳລະໃຫ້ບໍລິສຸດ; ແທ້ຈິງແລ້ວ, ເຖິງແມ່ນ
ມັນຈະ [ຂ]ຕາຍ, ມັນຈະຖືກເຮັດໃຫ້ຄືນມີຊີ
ວິດຊີວາອີກ, ແລະ ມັນຈະທົນກັບອຳນາດ
ນັ້ນໄດ້ ຊຶ່ງໂດຍອຳນາດນັ້ນມັນໄດ້ຖືກເຮັດ
ໃຫ້ຄືນມີຊີວິດຊີວາອີກ, ແລະ [ຄ]ຄົນຊອບທຳ
ຈະໄດ້ຮັບມັນເປັນ [ງ]ມູນມໍລະດົກ.
27 ເພາະເຖິງແມ່ນວ່າພວກເຂົາຕາຍ,
ພວກເຂົາຈະ [ກ]ລຸກຂຶ້ນອີກ, ເປັນ [ຂ]ຮ່າງກາຍ
ຝ່າຍວິນຍານ.
28 ຄົນທີ່ມີວິນຍານຂອງຊັ້ນສູງຈະໄດ້
ຮັບຮ່າງກາຍອັນດຽວກັນນັ້ນ ຊຶ່ງເຄີຍເປັນ
ຮ່າງກາຍທຳມະຊາດ; ແມ່ນແຕ່ພວກເຈົ້າ
ກໍຈະໄດ້ຮັບຮ່າງກາຍຂອງພວກເຈົ້າ, ແລະ
ລັດສະໝີພາບຂອງພວກເຈົ້າ ຈະເປັນລັດ
ສະໝີພາບນັ້ນ ຊຶ່ງໂດຍ [ກ]ລັດສະໝີພາບ
ນັ້ນຮ່າງກາຍຂອງພວກເຈົ້າໄດ້ຖືກເຮັດໃຫ້
ຄືນມີ [ຂ]ຊີວິດຊີວາອີກ.
29 ພວກເຈົ້າຜູ້ທີ່ຖືກເຮັດໃຫ້ຄືນມີຊີວິດຊີ
ວາອີກ ໂດຍສ່ວນໜຶ່ງຂອງລັດສະໝີພາບ
[ກ]ຊັ້ນສູງ ເມື່ອນັ້ນຈະໄດ້ຮັບຢ່າງດຽວກັນ
ນັ້ນ, ແມ່ນແຕ່ຄວາມສົມບູນ.
30 ແລະ ຄົນທີ່ຖືກເຮັດໃຫ້ຄືນມີຊີວິດຊີ
ວາອີກ ໂດຍສ່ວນໜຶ່ງຂອງລັດສະໝີພາບ
ຂອງ [ກ]ຊັ້ນກາງ ເມື່ອນັ້ນຈະໄດ້ຮັບຢ່າງດຽວ
ກັນນັ້ນ, ແມ່ນແຕ່ຄວາມສົມບູນ.
31 ແລະ ຄົນທີ່ຖືກເຮັດໃຫ້ຄືນມີຊີວິດ
ຊີວາອີກ ໂດຍສ່ວນໜຶ່ງຂອງລັດສະໝີ
ພາບຂອງ [ກ]ຊັ້ນຕ່ຳກໍຄືກັນ ເມື່ອນັ້ນຈະ
ໄດ້ຮັບຢ່າງດຽວກັນນັ້ນ, ແມ່ນແຕ່ຄວາມ
ສົມບູນ.
32 ແລະ ຄົນທີ່ເຫລືອຢູ່ຈະຖືກເຮັດໃຫ້
ຄືນມີ [ກ]ຊີວິດຊີວາຄືກັນ; ເຖິງຢ່າງໃດກໍ
ຕາມ, ພວກເຂົາຈະໄດ້ກັບຄືນສູ່ສະຖານ
ທີ່ເດີມຂອງພວກເຂົາເອງ, ເພື່ອຊື່ນຊົມ
ກັບສິ່ງທີ່ພວກເຂົາ [ຂ]ເຕັມໃຈທີ່ຈະຮັບເອົາ,
ເພາະພວກເຂົາບໍ່ໄດ້ເຕັມໃຈທີ່ຈະຮັບເອົາ
ສິ່ງທີ່ພວກເຂົາມີໂອກາດທີ່ຈະໄດ້ຮັບ.
33 ເພາະມັນຈະເປັນປະໂຫຍດຫຍັງແກ່
ມະນຸດ ຖ້າຫາກຂອງປະທານນັ້ນຖືກມອບ
ໃຫ້ເຂົາ, ແລະ ເຂົາບໍ່ຍອມຮັບເອົາຂອງ
ປະທານນັ້ນ? ຈົ່ງເບິ່ງ, ເຂົາບໍ່ປິຕິຍິນດີກັບ
ສິ່ງທີ່ຖືກມອບໃຫ້ແກ່ເຂົາ, ທັງບໍ່ປິຕິຍິນດີ
ກັບພຣະອົງຜູ້ປະທານຂອງປະທານນັ້ນໃຫ້
ເຂົາ.
34 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ສິ່ງທີ່ຖືກ
ປົກຄອງໂດຍກົດ ກໍຈະຖືກປົກປ້ອງໄວ້

25 *ກ* ຄມພ ແຜ່ນດິນໂລກ.
26 *ກ* ຄມພ ແຜ່ນດິນໂລກ—ພາວະສຸດທ້າຍຂອງແຜ່ນດິນໂລກ.
*ຂ* ຄມພ ໂລກ—ທີ່ສຸດຂອງໂລກ.
*ຄ* 2 ປຕ 3:11–14. ຄມພ ຊອບທຳ, ຄວາມຊອບທຳ.
*ງ* ມທ 5:5; ຄພ 45:58; 59:2; 63:49.
27 *ກ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ຂ* 1 ກຣທ 15:44.
28 *ກ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຂ* ຄພ 43:32; 63:51; 101:31.
29 *ກ* ຄມພ ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ; ລັດສະໝີພາບຂອງຊັ້ນສູງ.
30 *ກ* ຄມພ ລັດສະໝີພາບຂອງຊັ້ນກາງ.
31 *ກ* ຄມພ ລັດສະໝີພາບຂອງຊັ້ນຕ່ຳ.
32 *ກ* ແອວ 11:41–45.
*ຂ* ຄມພ ອຳເພີໃຈ.

ໂດຍກົດ ແລະ ຈະຖືກເຮັດໃຫ້ດີພ້ອມທຸກ
ຢ່າງ ແລະ ຖືກ [ກ]ຊຳລະໃຫ້ບໍລິສຸດໂດຍກົດ
ອັນດຽວກັນນັ້ນ.
35 ສິ່ງທີ່ [ກ]ຝ່າຝືນກົດ, ແລະ ບໍ່ປະຕິບັດ
ຕາມກົດ, ແຕ່ສະແຫວງຫາທີ່ຈະກາຍເປັນ
ກົດສຳລັບຕົນເອງ, ແລະ ຈະເຕັມໃຈທີ່ຈະ
ຢູ່ໃນບາບ, ແລະ ທັງໝົດຢູ່ໃນບາບ, ບໍ່ສາ
ມາດຖືກຊຳລະ ໃຫ້ບໍລິສຸດ ໂດຍກົດ, ທັງ
ໂດຍ [ຂ]ຄວາມເມດຕາ, [ຄ]ຄວາມຍຸດຕິທຳ,
ຫລື ການພິພາກສາ. ສະນັ້ນ, ພວກເຂົາຈະ
ຍັງ [ງ]ສົກກະປົກຢູ່ຄືເກົ່າ.
36 ອານາຈັກທັງໝົດມີກົດໃຫ້ໄວ້;
37 ແລະ ມີຫລາຍ [ກ]ອານາຈັກ; ເພາະບໍ່ມີ
ບ່ອນໃດທີ່ວ່າງ ຊຶ່ງໃນນັ້ນຈະບໍ່ມີອານາຈັກ;
ແລະ ບໍ່ມີອານາຈັກໃດທີ່ຕັ້ງຢູ່ ຊຶ່ງໃນນັ້ນຈະ
ບໍ່ມີບ່ອນວ່າງ, ບໍ່ວ່າຈະເປັນອານາຈັກທີ່ສູງ
ກວ່າ ຫລື ຕ່ຳກວ່າ.
38 ແລະ ແກ່ທຸກອານາຈັກມີ [ກ]ກົດໃຫ້ໄວ້;
ແລະ ແກ່ທຸກກົດມີຂອບເຂດ ແລະ ເງື່ອນ
ໄຂສະເພາະຂອງມັນ.
39 ທຸກຄົນທີ່ບໍ່ປະຕິບັດຕາມ [ກ]ເງື່ອນໄຂ
ເຫລົ່ານັ້ນ [ຂ]ບໍ່ມີຂໍ້ແກ້ຕົວໄດ້.
40 ເພາະ [ກ]ຄວາມຮູ້ແຈ້ງຈະແນບສະໜິດ
ຢູ່ກັບຄວາມຮູ້ແຈ້ງ; [ຂ]ປັນຍາຈະຮັບເອົາປັນ
ຍາ; [ຄ]ຄວາມຈິງຈະນ້ອມຮັບຄວາມຈິງ; [ງ]ຄຸນ
ນະທຳຈະຮັກຄຸນນະທຳ; [ຈ]ຄວາມສະຫວ່າງ
ຈະແນບສະໜິດຢູ່ກັບຄວາມສະຫວ່າງ;
ຄວາມເມດຕາຈະມີ [ສ]ຄວາມສົງສານຕໍ່
ຄວາມເມດຕາ ແລະ ອ້າງສິດໃນຄົນຂອງ
ນາງເອງ; ຄວາມຍຸດຕິທຳຈະດຳເນີນຕໍ່ໃນ
ເສັ້ນທາງຂອງມັນເອງ ແລະ ອ້າງສິດໃນ
ຄົນຂອງມັນເອງ; ການພິພາກສາຈະອອກ
ໄປຢູ່ຕໍ່ພຣະພັກຂອງພຣະອົງຜູ້ນັ່ງຢູ່ເທິງ
ພຣະບັນລັງ ແລະ ປົກຄອງ ແລະ ດຳເນີນ
ການທຸກສິ່ງ.
41 ພຣະອົງ [ກ]ເຂົ້າພຣະໄທທຸກສິ່ງທັງ
ປວງ, ແລະ ທຸກສິ່ງທັງປວງຢູ່ຕໍ່ພຣະພັກ
ຂອງພຣະອົງ, ແລະ ທຸກສິ່ງທັງປວງຢູ່ອ້ອມ
ຮອບພຣະອົງ; ແລະ ພຣະອົງຢູ່ເໜືອທຸກ
ສິ່ງທັງປວງ, ແລະ ໃນທຸກສິ່ງທັງປວງ, ແລະ
ຜ່ານທຸກສິ່ງທັງປວງ, ແລະ ອ້ອມຮອບທຸກ
ສິ່ງທັງປວງ; ແລະ ທຸກສິ່ງທັງປວງເປັນ
ຢູ່ໂດຍພຣະອົງ, ແລະ ມາຈາກພຣະອົງ,
ແມ່ນແຕ່ພຣະເຈົ້າ, ຕະຫລອດການ ແລະ
ຕະຫລອດໄປ.
42 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ພຣະອົງ
ໄດ້ປະທານກົດໃຫ້ແກ່ທຸກສິ່ງທັງປວງ, ຊຶ່ງ
ໂດຍກົດນັ້ນ ທຸກສິ່ງທັງປວງຈຶ່ງເຄື່ອນຍ້າຍ
ໃນ [ກ]ເວລາຂອງມັນ ແລະ ໃນລະດູການ
ຂອງມັນ;
43 ແລະ ເສັ້ນທາງຂອງສິ່ງເຫລົ່ານີ້ໄດ້
ຖືກກຳນົດໄວ້ແລ້ວ, ແມ່ນແຕ່ເສັ້ນທາງຂອງ
ສະຫວັນ ແລະ ແຜ່ນດິນໂລກ, ຊຶ່ງຮ່ວມ

34 *ກ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
35 *ກ* ຄມພ ກະບົດ, ການກະບົດ.
*ຂ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
*ຄ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ງ* ພນມ 22:11; 1 ນຟ 15:33–35; 2 ນຟ 9:16; ແອວ 7:21.
37 *ກ* ຄພ 78:15.
38 *ກ* ຄພ 88:13.
39 *ກ* ຄພ 130:20–21.
*ຂ* ຄມພ ຮັບຮອງ, ການຮັບຮອງ.
40 *ກ* ຄມພ ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ.
*ຂ* ຄມພ ສະຕິປັນຍາ.
*ຄ* ຄມພ ຈິງ, ຄວາມຈິງ.
*ງ* ຄມພ ຄຸນນະທຳ.
*ຈ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ສ* ຄມພ ເມດຕາສົງສານ, ຄວາມເມດຕາສົງສານ.
41 *ກ* 1 ຢຮ 3:20; 1 ນຟ 9:6; 2 ນຟ 9:20; ຄພ 38:1–3. ຄມພ ຮອບຮູ້ທຸກຢ່າງ.
42 *ກ* ດນອ 2:20–22; ອຣຮ 3:4–19.

ດ້ວຍ ແຜ່ນ ດິນ ໂລກ ແລະ ດາວ ພະ ເຄາະ ທັງໝົດ.

44 ແລະ ມັນ ໄດ້ ໃຫ້ [ກ]ຄວາມ ສະ ຫວ່າງ ແກ່ ກັນ ແລະ ກັນ ໃນ ເວລາ ຂອງ ມັນ ແລະ ໃນລະດູການຂອງມັນ, ໃນນາທີຂອງມັນ, ໃນ ຊົ່ວ ໂມງ ຂອງ ມັນ, ໃນ ມື້ ຂອງ ມັນ, ໃນ ອາທິດຂອງມັນ, ໃນເດືອນຂອງມັນ, ໃນປີ ຂອງມັນ—ທຸກສິ່ງທັງປວງເຫລົ່ານີ້ຄື [ຂ]ໜຶ່ງ ປີສຳ ລັບ ພຣະ ເຈົ້າ, ແຕ່ ບໍ່ ແມ່ນ ສຳລັບ ມະນຸດ.

45 ແຜ່ນ ດິນ ໂລກ ໝຸນ ໄປ ເທິງ ປີກ ຂອງ ນາງ, ແລະ [ກ]ດວງ ອາທິດ ໃຫ້ ຄວາມ ສະ ຫວ່າງ ຂອງ ມັນ ໃນ ເວລາ ກາງ ເວັນ, ແລະ ດວງ ເດືອນ ໃຫ້ຄວາມ ສະ ຫວ່າງຂອງ ມັນ ໃນເວລາກາງຄືນ, ແລະ ໝູ່ດວງດາວກໍໃຫ້ ຄວາມສະຫວ່າງຂອງມັນນຳອີກ, ໃນຂະນະ ທີ່ມັນໝຸນໄປເທິງປີກຂອງມັນໃນລັດສະໝີ ພາບຂອງມັນ, ໃນທ່າມກາງ [ຂ]ອຳນາດຂອງ ພຣະເຈົ້າ.

46 ເຮົາ ຈະ ປຽບ ທຽບ ອາ ນາ ຈັກ ເຫລົ່າ ນີ້ ໃສ່ກັບສິ່ງໃດນໍ, ເພື່ອພວກເຈົ້າຈະໄດ້ເຂົ້າ ໃຈ?

47 ຈົ່ງ ເບິ່ງ, ທຸກ ສິ່ງ ເຫລົ່າ ນີ້ ເປັນ ອາ ນາ ຈັກ, ແລະ ມະນຸດຄົນໃດທີ່ໄດ້ເຫັນສ່ວນໃດ ຫລື ສ່ວນນ້ອຍທີ່ສຸດຂອງສິ່ງເຫລົ່ານີ້ ກໍໄດ້ [ກ]ເຫັນພຣະເຈົ້າເຄື່ອນຍ້າຍໃນເດຊານຸພາບ ແລະ ອຳນາດຂອງພຣະອົງ.

48 ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ ເຂົາ ໄດ້ ເຫັນພຣະອົງ; ເຖິງຢ່າງໃດກໍຕາມ, ພຣະອົງ ຜູ້ໄດ້ສະເດັດມາຫາຄົນ [ກ]ຂອງພຣະອົງເອງ ແຕ່ບໍ່ໄດ້ຖືກຍອມຮັບ.

49 [ກ] ຄວາມ ສະ ຫວ່າງ ສ່ອງ ແສງ ຢູ່ ໃນ ຄວາມມືດ ແລະ ຄວາມມືດບໍ່ເຂົ້າໃຈມັນ ເລີຍ; ເຖິງຢ່າງໃດກໍຕາມ, ວັນນັ້ນຈະມາ ເຖິງ ເມື່ອພວກເຈົ້າຈະ [ຂ]ເຂົ້າໃຈແມ່ນແຕ່ ພຣະເຈົ້າ, ໂດຍຖືກເຮັດໃຫ້ມີຊີວິດຊີວາຄືນ ອີກໃນພຣະອົງ ແລະ ໂດຍພຣະອົງ.

50 ເມື່ອນັ້ນພວກເຈົ້າຈະຮູ້ວ່າ ພວກເຈົ້າ ໄດ້ເຫັນເຮົາ, ວ່າເຮົາເປັນຢູ່, ແລະ ວ່າເຮົາ ຄືຄວາມສະຫວ່າງທີ່ແທ້ຈິງ ຊຶ່ງຢູ່ໃນພວກ ເຈົ້າ, ແລະ ວ່າພວກເຈົ້າຢູ່ໃນເຮົາ; ຖ້າບໍ່ດັ່ງ ນັ້ນພວກເຈົ້າຈະຮຸ່ງເຮືອງບໍ່ໄດ້.

51 ຈົ່ງເບິ່ງ, ເຮົາຈະປຽບທຽບອານາຈັກ ດັ່ງກ່າວໃສ່ກັບຊາຍຄົນໜຶ່ງທີ່ມີທົ່ງ, ແລະ ລາວໄດ້ສົ່ງຜູ້ຮັບໃຊ້ຂອງລາວອອກໄປໃນ ທົ່ງເພື່ອຂຸດດິນໃນທົ່ງ.

52 ແລະ ລາວໄດ້ກ່າວກັບຄົນທຳອິດວ່າ: ໃຫ້ເຈົ້າໄປ ແລະ ເຮັດວຽກຢູ່ໃນທົ່ງ, ແລະ ໃນ ຊົ່ວ ໂມງ ທຳ ອິດ ເຮົາ ຈະ ມາ ຫາ ເຈົ້າ, ແລະ ເຈົ້າຈະເຫັນຄວາມຊື່ນຊົມຢູ່ໃນໃບ ໜ້າຂອງເຮົາ.

53 ແລະ ລາວໄດ້ກ່າວກັບຄົນທີສອງວ່າ: ໃຫ້ເຈົ້າໄປໃນທົ່ງ, ແລະ ໃນຊົ່ວໂມງທີສອງ ເຮົາຈະມາຢ້ຽມຢາມເຈົ້າດ້ວຍຄວາມຊື່ນ ຊົມຢູ່ໃນໃບໜ້າຂອງເຮົາ.

54 ແລະ ກັບ ຄົນ ທີ ສາມ ນຳ ອີກ, ໂດຍ ກ່າວວ່າ: ເຮົາຈະມາຢ້ຽມຢາມເຈົ້າ;

55 ແລະ ກັບຄົນທີ ສີ່, ແລະ ຕໍ່ໆ ໄປ ຈົນ ເຖິງຄົນທີສິບສອງ.

56 ແລະ ເຈົ້ານາຍຂອງທົ່ງໄດ້ໄປຫາຄົນ ທຳອິດໃນຊົ່ວໂມງທຳອິດ, ແລະ ໄດ້ຢູ່ກັບ ເຂົາຕະຫລອດຊົ່ວໂມງນັ້ນ, ແລະ ເຂົາໄດ້

44 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງ ຂອງພຣະຄຣິດ.
*ຂ* ພສສ 90:4; 2 ປຕ 3:8.
45 *ກ* ປຖກ 1:16; ອຣຣ 4:16.
*ຂ* ຄພ 88:7–13.
47 *ກ* ແອວ 30:44; ມຊ 1:27–28; 6:63; ອຣຣ 3:21.
48 *ກ* ຢຮ 1:11; 3 ນຟ 9:16; ຄພ 39:1–4.
49 *ກ* ຄພ 6:21; 50:23–24; 84:45–47.
*ຂ* ຢຮ 17:3; ຄພ 93:1, 28.

ຮັບຄວາມຍິນດີດ້ວຍຄວາມສະຫວ່າງໃນ
ໃບໜ້າຂອງເຈົ້ານາຍຂອງເຂົາ.
57 ແລະ ຈາກນັ້ນລາວຈຶ່ງໄດ້ໄປຈາກຄົນ
ທຳອິດ ເພື່ອລາວຈະໄດ້ໄປຢ້ຽມຢາມຄົນທີ
ສອງນຳອີກ, ແລະ ຄົນທີສາມ, ແລະ ຄົນທີ
ສີ່, ແລະ ຄົນຕໍ່ໆໄປຈົນເຖິງຄົນທີສິບສອງ.
58 ແລະ ດັ່ງນັ້ນ ພວກເຂົາທັງໝົດຈຶ່ງໄດ້
ຮັບຄວາມສະຫວ່າງຈາກໃບໜ້າຂອງເຈົ້າ
ນາຍຂອງພວກເຂົາ, ທຸກຄົນໄດ້ຮັບໃນຊົ່ວ
ໂມງຂອງເຂົາ, ແລະ ໃນເວລາຂອງເຂົາ,
ແລະ ໃນລະດູການຂອງເຂົາ—
59 ໂດຍເລີ່ມຕົ້ນກັບຄົນທຳອິດ, ແລະ
ຕໍ່ໆໄປຈົນເຖິງຄົນ *ກ*ສຸດທ້າຍ, ແລະ ຈາກ
ຄົນສຸດທ້າຍຈົນເຖິງຄົນທຳອິດ, ແລະ ຈາກ
ຄົນທຳອິດຈົນເຖິງຄົນສຸດທ້າຍ;
60 ທຸກຄົນຕາມລຳດັບຂອງເຂົາເອງ, ຈົນ
ກວ່າຊົ່ວໂມງໝົດໄປ, ແມ່ນແຕ່ຕາມທີ່ເຈົ້າ
ນາຍຂອງເຂົາໄດ້ບັນຊາເຂົາໄວ້, ເພື່ອວ່າ
ເຈົ້ານາຍຂອງເຂົາຈະໄດ້ມີບາລະມີຜ່ານ
ເຂົາ, ແລະ ເຂົາມີບາລະມີຜ່ານເຈົ້ານາຍ
ຂອງເຂົາ, ເພື່ອວ່າພວກເຂົາທັງໝົດຈະໄດ້
ມີບາລະມີ.
61 ສະນັ້ນ, ເຮົາຈຶ່ງປຽບທຽບອານາຈັກ
ເຫລົ່ານີ້ໃສ່ກັບຄຳອຸປະມານີ້, ແລະ *ກ*ຜູ້ອາ
ໄສຢູ່ໃນນັ້ນ—ແຕ່ລະອານາຈັກໃນຊົ່ວໂມງ
ຂອງມັນເອງ, ແລະ ໃນເວລາຂອງມັນເອງ,
ແລະ ໃນລະດູການຂອງມັນເອງ, ແມ່ນແຕ່
ຕາມຄຳສັ່ງ ຊຶ່ງພຣະເຈົ້າໄດ້ກຳນົດໄວ້.
62 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າ, *ກ*ເພື່ອນ
ທັງຫລາຍຂອງເຮົາວ່າ ເຮົາຝາກຄຳກ່າວ
ເຫລົ່ານີ້ໄວ້ກັບພວກເຈົ້າເພື່ອໃຫ້ *ຂ*ໄຕ່ຕອງ
ຢູ່ໃນໃຈຂອງພວກເຈົ້າ, ດ້ວຍບັນຍັດນີ້ຊຶ່ງ
ເຮົາປະທານໃຫ້ແກ່ພວກເຈົ້າ, ວ່າພວກ
ເຈົ້າຈະ *ຄ*ເອີ້ນຫາເຮົາໃນຂະນະທີ່ເຮົາຢູ່
ໃກ້—
63 ຈົ່ງ *ກ*ເຂົ້າມາໃກ້ເຮົາ ແລະ ເຮົາຈະ
ເຂົ້າໃກ້ພວກເຈົ້າ; ຈົ່ງ *ຂ*ສະແຫວງຫາເຮົາ
ດ້ວຍຄວາມພາກພຽນ ແລະ ພວກເຈົ້າຈະ
*ຄ*ພົບເຮົາ; ຈົ່ງໝັ່ນຂໍ ແລ້ວພວກເຈົ້າຈະໄດ້
ຮັບ; ຈົ່ງໝັ່ນເຄາະ ແລ້ວຈະມີຜູ້ໄຂປະຕູໃຫ້
ພວກເຈົ້າ.
64 ສິ່ງໃດກໍຕາມທີ່ພວກເຈົ້າ *ກ*ທູນຂໍພຣະ
ບິດາໃນນາມຂອງເຮົາ ມັນຈະຖືກມອບໃຫ້
ແກ່ພວກເຈົ້າ, ອັນທີ່ *ຂ*ສົມຄວນສຳລັບພວກ
ເຈົ້າ;
65 ແລະ ຖ້າຫາກພວກເຈົ້າທູນຂໍສິ່ງໃດ
ທີ່ບໍ່ *ກ*ສົມຄວນສຳລັບພວກເຈົ້າ, ມັນຈະ
ກາຍເປັນການ *ຂ*ກ່າວໂທດຂອງພວກເຈົ້າ.
66 ຈົ່ງເບິ່ງ, ສິ່ງທີ່ພວກເຈົ້າໄດ້ຍິນເປັນ
ຄືກັນກັບ *ກ*ສຽງຂອງຄົນປ່າວຮ້ອງຢູ່ໃນ
ຖິ່ນແຫ້ງແລ້ງກັນດານ, ໃນຖິ່ນແຫ້ງແລ້ງ
ກັນດານ, ເພາະພວກເຈົ້າບໍ່ສາມາດເຫັນ
ເພິ່ນ—ສຽງຂອງເຮົາ, ເພາະສຽງຂອງເຮົາ
ຄືພຣະວິນຍານ; *ຂ*ພຣະວິນຍານຂອງເຮົາ
ຄືຄວາມຈິງ; *ຄ*ຄວາມຈິງຈະຄົງຢູ່ ແລະ ບໍ່ມີ
ທີ່ສິ້ນສຸດ; ແລະ ຖ້າຫາກມັນຢູ່ກັບພວກເຈົ້າ
ມັນຈະມີຢ່າງຫລວງຫລາຍ.

59 *ກ* ມທ 20:1–16.
61 *ກ* ຄພ 76:24.
62 *ກ* ຄພ 84:63; 93:45.
*ຂ* ຄມພ ໄຕ່ຕອງ.
*ຄ* ອຊຢ 55:6;
ຢກບ 1:5;
ຄພ 46:7.
63 *ກ* ຊກຢ 1:3; ຢກບ 4:8;
ພນມ 3:20.
*ຂ* 1 ຂຄ 28:9;
ອທ 12:41;
ຄພ 101:38.
*ຄ* ຄພ 4:7; 49:26.
64 *ກ* ຄມພ ອະທິຖານ, ການອະ
ທິຖານ, ຄຳອະທິຖານ.
*ຂ* ຄພ 18:18; 46:28–30.
65 *ກ* ຢກບ 4:3.
*ຂ* ຄພ 63:7–11.
66 *ກ* ອຊຢ 40:3;
1 ນຟ 17:13;
ແອວ 5:37–38;
ຄພ 128:20.
*ຂ* ຄມພ ຄວາມສະຫວ່າງ,
ຄວາມສະຫວ່າງຂອງ
ພຣະຄຣິດ;
ພຣະວິນຍານບໍລິສຸດ.
*ຄ* ຄມພ ຈິງ, ຄວາມຈິງ.

67 ແລະ ຖ້າຫາກດວງຕາຂອງພວກເຈົ້າ
[ກ]ເຫັນ ແກ່ [ຂ]ລັດສະໝີພາບຂອງເຮົາ ແຕ່
ຢ່າງດຽວ, ທັງຮ່າງກາຍຂອງພວກເຈົ້າຈະ
ເຕັມໄປດ້ວຍຄວາມສະຫວ່າງ, ແລະ ຈະບໍ່
ມີຄວາມມືດໃນພວກເຈົ້າ; ແລະ ຮ່າງກາຍ
ນັ້ນ ຊຶ່ງເຕັມໄປດ້ວຍຄວາມສະຫວ່າງ [ຄ]ເຂົ້າ
ໃຈທຸກສິ່ງທັງປວງ.
68 ສະນັ້ນ, ຈົ່ງ [ກ]ຊຳລະຕົນເອງໃຫ້ບໍລິ
ສຸດ ເພື່ອໃຫ້ [ຂ]ຈິດໃຈຂອງພວກເຈົ້າເຫັນ
ແກ່ພຣະເຈົ້າແຕ່ຢ່າງດຽວ, ແລະ ວັນເວລາ
ຈະມາເຖິງເມື່ອພວກເຈົ້າຈະ [ຄ]ເຫັນພຣະ
ອົງ; ເພາະພຣະອົງຈະເປີດເຜີຍພຣະພັກ
ຂອງພຣະອົງແກ່ພວກເຈົ້າ, ແລະ ມັນຈະ
ເປັນໄປໃນເວລາຂອງພຣະອົງເອງ, ແລະ
ໃນວິທີທາງຂອງພຣະອົງເອງ, ແລະ ຕາມ
ພຣະປະສົງຂອງພຣະອົງເອງ.
69 ຈົ່ງລະນຶກເຖິງຄຳສັນຍາອັນຍິ່ງໃຫຍ່
ແລະ ສຸດທ້າຍຊຶ່ງເຮົາໄດ້ເຮັດໄວ້ກັບພວກ
ເຈົ້າ; ຈົ່ງຕັດຄວາມນຶກຄິດທີ່ [ກ]ໄຮ້ປະໂຫຍດ
ຂອງພວກເຈົ້າ ແລະ [ຂ]ການຫົວເຮຮາຂອງ
ພວກເຈົ້າອອກໄປໃຫ້ໄກຈາກພວກເຈົ້າ.
70 ຈົ່ງຢູ່, ຈົ່ງຢູ່ໃນບ່ອນນີ້ຕໍ່ໄປ, ແລະ ຈົ່ງ
ເອີ້ນໃຫ້ມີການຊຸມນຸມທີ່ສັກສິດ, ແມ່ນແຕ່
ການຊຸມນຸມຂອງຄົນເຫລົ່ານັ້ນທີ່ເປັນຄົນ
ງານກຸ່ມທຳອິດໃນອານາຈັກສຸດທ້າຍນີ້.
71 ແລະ ໃຫ້ຄົນເຫລົ່ານັ້ນທີ່ພວກເຂົາໄດ້
[ກ]ເຕືອນໃນເສັ້ນທາງເດີນຂອງພວກເຂົາ
ເອີ້ນຫາພຣະຜູ້ເປັນເຈົ້າ, ແລະ ໄຕ່ຕອງເຖິງ
ການເຕືອນໃນໃຈຂອງພວກເຂົາ ຊຶ່ງພວກ
ເຂົາໄດ້ຮັບ, ຊົ່ວໄລຍະໜຶ່ງ.
72 ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາຈະດູແລ
ຜູ້ຄົນຂອງພວກເຈົ້າ, ແລະ ຈະຍົກພວກ
ແອວເດີຂຶ້ນ ແລະ ສົ່ງໄປໃຫ້ພວກເຂົາ.
73 ຈົ່ງເບິ່ງ, ເຮົາຈະເລັ່ງວຽກງານຂອງ
ເຮົາເມື່ອເຖິງເວລາຂອງມັນ.
74 ແລະ ເຮົາມອບໃຫ້ແກ່ພວກເຈົ້າ, ຜູ້
ເປັນ [ກ]ຄົນງານກຸ່ມທຳອິດໃນອານາຈັກສຸດ
ທ້າຍນີ້, ບັນຍັດຂໍ້ໜຶ່ງ ວ່າໃຫ້ພວກເຈົ້າຈັດ
ການຊຸມນຸມກັນ, ແລະ ວາງລະບຽບຕົນ
ເອງ, ແລະ ຕຽມຕົນເອງ, ແລະ ຊຳລະຕົນ
ເອງໃຫ້ບໍລິສຸດ; ແທ້ຈິງແລ້ວ, [ຂ]ເຮັດໃຫ້ຫົວ
ໃຈຂອງພວກເຈົ້າບໍລິສຸດ, ແລະ [ຄ]ຊຳລະມື
ແລະ ຕີນຂອງພວກເຈົ້າຢູ່ຕໍ່ໜ້າເຮົາ, ເພື່ອ
ວ່າເຮົາຈະເຮັດໃຫ້ພວກເຈົ້າ [ງ]ສະອາດ;
75 ເພື່ອເຮົາຈະເປັນພະຍານຕໍ່ [ກ]ພຣະ
ບິດາຂອງພວກເຈົ້າ, ແລະ ພຣະເຈົ້າຂອງ
ພວກເຈົ້າ, ແລະ ພຣະເຈົ້າຂອງເຮົາ, ວ່າ
ພວກເຈົ້າສະອາດຈາກເລືອດຂອງຄົນລຸ້ນ
ທີ່ຊົ່ວຊ້ານີ້; ເພື່ອເຮົາຈະເຮັດໃຫ້ຄຳສັນຍາ
ນີ້, ຄຳສັນຍາອັນຍິ່ງໃຫຍ່ ແລະ ສຸດທ້າຍນີ້,
ຊຶ່ງເຮົາໄດ້ເຮັດໄວ້ກັບພວກເຈົ້າສຳເລັດຄົບ
ຖ້ວນ, ເມື່ອເຮົາປະສົງ.
76 ພ້ອມນີ້, ເຮົາຈະໃຫ້ບັນຍັດຂໍ້ໜຶ່ງແກ່
ພວກເຈົ້າ ວ່າພວກເຈົ້າຈະສືບຕໍ່ໃນ [ກ]ການ

67 *ກ* ມທ 6:22; ລກ 11:34–36; ຄພ 82:19.
*ຂ* ຢຮ 7:18.
*ຄ* ສພສ 28:5; ຄພ 93:28. ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.
68 *ກ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
*ຂ* ຄມພ ຈິດໃຈ.
*ຄ* ຄພ 67:10–13; 93:1; 97:15–17.
69 *ກ* ມທ 12:36; ມຊຢ 4:29–30; ແອວ 12:14.
*ຂ* ຄພ 59:15; 88:121.
71 *ກ* ຄມພ ເຕືອນ, ຄຳເຕືອນ.
74 *ກ* ມທ 20:1, 16.
*ຂ* ລລວ 20:7–8; 3 ນຟ 19:28–29; ຄພ 50:28–29; 133:62.
*ຄ* ຄມພ ສະອາດ ແລະ ບໍ່ສະອາດ.
*ງ* ອທ 12:37.
75 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ; ພຣະບິດາຜູ້ສະຖິດຢູ່ໃນສະຫວັນ; ມະນຸດ—ມະນຸດ, ລູກທາງວິນຍານຂອງພຣະບິດາເທິງສະຫວັນ.
76 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

ອະທິຖານ ແລະ [ຂ]ການຖືສິນອົດເຂົ້າ ນັບ
ແຕ່ເວລານີ້ໄປ.
77 ແລະ ເຮົາ ຈະ ໃຫ້ ບັນ ຍັດ ຂໍ້ ໜຶ່ງ ແກ່
ພວກເຈົ້າ ວ່າພວກເຈົ້າຈະ [ກ]ສິດສອນ [ຂ]ຄຳ
ສອນຂອງອານາຈັກໃຫ້ກັນແລະກັນ.
78 ຈົ່ງສິດສອນຢ່າງພາກພຽນ ແລະ
[ກ]ພຣະ ຄຸນ ຂອງ ເຮົາຈະ ຢູ່ ກັບພວກເຈົ້າ,
ເພື່ອພວກເຈົ້າຈະໄດ້ຮັບ [ຂ]ການແນະນຳ
ຢ່າງສົມບູນຫລາຍຂຶ້ນໃນທິດສະດີ, ໃນ
ຫລັກທຳ, ໃນຄຳສອນ, ໃນກົດຂອງພຣະ
ກິດຕິຄຸນ, ໃນທຸກສິ່ງທີ່ກ່ຽວກັບອານາຈັກ
ຂອງພຣະເຈົ້າ, ອັນທີ່ສົມຄວນສຳລັບພວກ
ເຈົ້າທີ່ຈະເຂົ້າໃຈ;
79 ກ່ຽວ ກັບ ສິ່ງ ຕ່າງໆ ທັງ ໃນ [ກ]ຟ້າ
ສະຫວັນ ແລະ ໃນແຜ່ນດິນໂລກ, ແລະ
ໃຕ້ແຜ່ນດິນໂລກ; ສິ່ງທີ່ເປັນມາ, ສິ່ງທີ່ເປັນ
ຢູ່, ສິ່ງທີ່ຕ້ອງເກີດຂຶ້ນໃນບໍ່ດົນ; ສິ່ງທີ່ຢູ່ໃນ
ບ້ານ, ສິ່ງທີ່ຢູ່ຕ່າງແດນ; [ຂ]ສົງຄາມ ແລະ
ຄວາມຫຍຸ້ງເຫຍີງຂອງປະຊາຊາດທັງ
ຫລາຍ, ແລະ ການພິພາກສາຊຶ່ງມີຢູ່ເທິງ
ແຜ່ນດິນໂລກ; ແລະ ຄວາມຮູ້ເລື່ອງປະເທດ
ຕ່າງໆ ແລະ ອານາຈັກຕ່າງໆນຳອີກ—
80 ເພື່ອວ່າພວກເຈົ້າຈະຕຽມພ້ອມໃນ
ທຸກສິ່ງ ເມື່ອເຮົາຈະສົ່ງພວກເຈົ້າໄປອີກ
ເພື່ອຂະຫຍາຍການເອີ້ນ ຊຶ່ງໃນການເອີ້ນ
ນັ້ນ ເຮົາໄດ້ເອີ້ນພວກເຈົ້າ, ແລະ ພາລະ
ກິດນັ້ນຊຶ່ງເຮົາໄດ້ມອບໝາຍໃຫ້ແກ່ພວກ
ເຈົ້າ.
81 ຈົ່ງເບິ່ງ, ເຮົາສົ່ງພວກເຈົ້າອອກໄປ
ເປັນ [ກ]ພະຍານ ແລະ ເຕືອນຜູ້ຄົນ, ແລະ
ມັນຈຳເປັນທີ່ທຸກຄົນຜູ້ໄດ້ຖືກເຕືອນ ຈະ
[ຂ]ເຕືອນເພື່ອນບ້ານຂອງຕົນ.
82 ສະນັ້ນ, ພວກເຂົາຈຶ່ງຕົກຢູ່ໃນສະ
ພາບທີ່ບໍ່ມີຂໍ້ແກ້ຕົວ, ແລະ ບາບຂອງພວກ
ເຂົາຈະຢູ່ເທິງຫົວຂອງພວກເຂົາເອງ.
83 ຄົນທີ່ [ກ]ສະແຫວງຫາເຮົາ [ຂ]ກ່ອນ ຈະ
ພົບເຮົາ, ແລະ ຈະບໍ່ຖືກປະຖິ້ມ.
84 ສະນັ້ນ, ໃຫ້ພວກເຈົ້າຢູ່ບ່ອນນັ້ນ,
ແລະ ທຳງານຢ່າງພາກພຽນ, ເພື່ອວ່າພວກ
ເຈົ້າຈະດີພ້ອມໃນການປະຕິບັດສາດສະ
ໜາກິດທີ່ຈະອອກໄປ ໃນບັນດາ [ກ]ຄົນຕ່າງ
ຊາດເປັນເທື່ອສຸດທ້າຍ, ຫລາຍເທົ່າທີ່ພຣະ
ໂອດຂອງພຣະຜູ້ເປັນເຈົ້າຈະເອີ່ຍຊື່, ທີ່ຈະ
[ຂ]ຜູກມັດກົດ ແລະ ຜະນຶກປະຈັກພະຍານ,
ແລະ ຕຽມໄພ່ພົນຂອງພຣະເຈົ້າໄວ້ສຳລັບ
ຊົ່ວໂມງແຫ່ງການພິພາກສາຊຶ່ງຈະມາເຖິງ;
85 ເພື່ອວ່າຈິດວິນຍານຂອງພວກເຂົາ
ຈະໜີພົ້ນຈາກພຣະພິໂລດຂອງພຣະເຈົ້າ,
[ກ]ຄວາມພິນາດຂອງຄວາມໜ້າກຽດຊັງ ຊຶ່ງ
ຄອຍຖ້າຄົນຊົ່ວ, ທັງໃນໂລກນີ້ ແລະ ໃນ
ໂລກທີ່ຈະມາເຖິງ. ຕາມຄວາມຈິງແລ້ວ,
ເຮົາກ່າວກັບພວກເຈົ້າວ່າ ໃຫ້ຄົນເຫລົ່ານັ້ນ
ຜູ້ທີ່ບໍ່ໄດ້ເປັນແອວເດີກຸ່ມທຳອິດດຳເນີນຕໍ່
ໄປໃນສວນອະງຸ່ນຈົນກວ່າພຣະຜູ້ເປັນເຈົ້າ
ຈະ [ຂ]ເອີ້ນພວກເຂົາ, ເພາະມັນຍັງບໍ່ເຖິງ
ເວລາຂອງພວກເຂົາເທື່ອ; ອາພອນຂອງ
ພວກເຂົາບໍ່ [ຄ]ສະອາດຈາກເລືອດຂອງຄົນ
ລຸ້ນນີ້.

76 *ຂ* ຄນພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.
77 *ກ* ຄນພ ສອນ, ຜູ້ສອນ, ຄູສອນ.
*ຂ* ຄນພ ຄຳສອນຂອງພຣະຄຣິດ.
78 *ກ* ຄນພ ພຣະຄຸນ.
*ຂ* ຄພ 88:118; 90:15; 93:53.
79 *ກ* ຄນພ ສະຫວັນ.
*ຂ* ຄນພ ສົງຄາມ.
81 *ກ* ຄນພ ເປັນພະຍານ.
*ຂ* ຄພ 63:58.
ຄນພ ເຕືອນ, ຄຳເຕືອນ.
83 *ກ* ພບຍ 4:29–31; ຢມຢ 29:12–14; ຄພ 54:10.
*ຂ* ແອວ 37:35.
84 *ກ* ຈສ—ປ 1:41.
*ຂ* ອຊຢ 8:16–17.
85 *ກ* ມທ 24:15.
*ຂ* ຄພ 11:15.
*ຄ* 1 ນຟ 12:10–11; ຢຄ 1:19; 2:2; ຄພ 112:33.
ຄນພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.

86 ຈົ່ງດຳລົງຢູ່ກັບ [ກ]ເສລີພາບທີ່ພວກ
ເຈົ້າໄດ້ຖືກເຮັດໃຫ້ເປັນ [ຂ]ອິດສະລະ; ຢ່າ
ໃຫ້ຕົນເອງ [ຄ]ພົວພັນຢູ່ໃນ [ງ]ບາບ, ແຕ່ໃຫ້ມື
ຂອງພວກເຈົ້າ [ຈ]ສະອາດ, ຈົນກວ່າພຣະຜູ້
ເປັນເຈົ້າສະເດັດມາ.

87 ເພາະ ອີກບໍ່ຫລາຍມື້ຈາກນີ້ ແລະ
[ກ]ແຜ່ນດິນໂລກຈະ [ຂ]ສັ່ນ ແລະ ເນັ້ງໄປ
ເບື້ອງນັ້ນ ແລະ ເບື້ອງນີ້ເໝືອນດັ່ງຄົນເມົາ
ເຫລົ້າ; ແລະ [ຄ]ດວງອາທິດຈະເຊື່ອງໜ້າ
ຂອງມັນ, ແລະ ຈະບໍ່ຍອມສ່ອງແສງ; ແລະ
ດວງເດືອນຈະອາບຢູ່ໃນ [ງ]ເລືອດ; ແລະ
[ຈ]ໝູ່ດວງດາວຈະໂມໂຫຢ່າງໜັກ, ແລະ ມັນ
ຈະໂຍນໂຕເອງລົງມາຄືກັນກັບໝາກເດື່ອ
ຫລົ່ນລົງຈາກຕົ້ນ.

88 ແລະ ຫລັງຈາກປະຈັກພະຍານຂອງ
ພວກເຈົ້າ, ພຣະພິໂລດ ແລະ ຄວາມເຄືອງ
ແຄ້ນຈະມາສູ່ຜູ້ຄົນ.

89 ເພາະຫລັງຈາກປະຈັກພະຍານຂອງ
ພວກເຈົ້າ, ປະຈັກພະຍານຂອງ [ກ]ແຜ່ນ
ດິນໄຫວຈະຕາມມາ, ຊຶ່ງຈະກໍ່ໃຫ້ເກີດ
ການຄວນຄາງໃນໃຈກາງຂອງນາງ, ແລະ
ມະນຸດຈະລົ້ມລົງສູ່ພື້ນດິນ ແລະ ບໍ່ສາມາດ
ຢືນຂຶ້ນໄດ້.

90 ແລະ ປະຈັກພະຍານຂອງ [ກ]ສຽງຟ້າ
ຮ້ອງກໍມາເຖິງນຳອີກ, ແລະ ທັງແສງຟ້າ
ແມບເຫລື້ອມ, ແລະ ສຽງພະຍຸຝົນຟ້າຄະ
ນອງ, ແລະ ສຽງຄື້ນທະເລຊັດຂຶ້ນເໜືອຝັ່ງ
ຂອງມັນ.

91 ແລະ ທຸກສິ່ງທັງປວງຈະຢູ່ໃນ [ກ]ຄວາມ
ສັບສົນວຸ້ນວາຍ; ແລະ ແນ່ນອນ, ໃຈຂອງ
ມະນຸດຈະທໍ້ຖອຍ; ເພາະຄວາມຢ້ານກົວ
ຈະມາສູ່ທຸກຜູ້ຄົນ.

92 ແລະ [ກ]ເຫລົ່າທູດຈະເຫາະຜ່ານທ່າມ
ກາງຟ້າສະຫວັນ, ເປັ່ງສຽງຮ້ອງດ້ວຍສຽງ
ດັງ, ເປົ່າແກຂອງພຣະເຈົ້າ, ໂດຍກ່າວວ່າ:
ຈົ່ງຕຽມ, ຈົ່ງຕຽມ, ໂອ້ ຜູ້ອາໄສຂອງແຜ່ນ
ດິນໂລກ; ເພາະການພິພາກສາຂອງພຣະ
ເຈົ້າຂອງພວກເຮົາມາເຖິງແລ້ວ. ຈົ່ງເບິ່ງ,
ແລະ ເບິ່ງແມ, [ຂ]ເຈົ້າບ່າວມາແລ້ວ; ພວກ
ເຈົ້າຈົ່ງອອກໄປຕ້ອນຮັບພຣະອົງ.

93 ແລະ ໃນທັນທີ [ກ]ເຄື່ອງໝາຍອັນຍິ່ງ
ໃຫຍ່ຈະປະກົດຂຶ້ນໃນສະຫວັນ, ແລະ ທຸກ
ຜູ້ຄົນຈະເຫັນພ້ອມກັນ.

94 ແລະ ທູດອົງໜຶ່ງອີກຈະເປົ່າແກຂອງ
ເພິ່ນ, ໂດຍກ່າວວ່າ: [ກ]ສາດສະໜາຈັກ
[ຂ]ອັນຍິ່ງໃຫຍ່ນັ້ນ, [ຄ]ມານດາຂອງຄວາມ
ໜ້າກຽດຊັງ, ຊຶ່ງເຮັດໃຫ້ປະຊາຊາດທັງ
ປວງດື່ມເຫລົ້າອະງຸ່ນແຫ່ງພຣະພິໂລດ
ຈາກ [ງ]ການລ່ວງປະເວນີຂອງນາງ, ຊຶ່ງຂົ່ມ
ເຫັງໄພ່ພົນຂອງພຣະເຈົ້າ, ທີ່ເຮັດໃຫ້ພວກ
ເຂົາເລືອດຕົກຢາງອອກ—ນາງຜູ້ນັ່ງຢູ່ເທິງ
ຜືນນ້ຳອັນກວ້າງໃຫຍ່, ແລະ ເທິງໝູ່ເກາະ

86 *ກ* ມຊຢ 5:8.
ຄມພ ເສລີພາບ.
*ຂ* ຢຮ 8:36.
ຄມພ ອິດສະລະ, ອິດສະ
ລະພາບ;
ອຳເພີໃຈ.
*ຄ* ຄລຕ 5:1.
*ງ* ຄມພ ບາບ.
*ຈ* ໂຢບ 17:9;
ພສສ 24:4;
ແອວ 5:19.
87 *ກ* ອຊຢ 13:4–13.
*ຂ* ຄພ 43:18.
*ຄ* ຢອ 2:10;
ຄພ 45:42; 133:49.
*ງ* ພນມ 6:12.
*ຈ* ຢອ 3:15.
89 *ກ* ຄພ 45:33.
90 *ກ* ພນມ 8:5;
ຄພ 43:17–25.
91 *ກ* ຄພ 45:26.
92 *ກ* ພນມ 8:13;
ຄພ 133:17.
*ຂ* ມທ 25:1–13;
ຄພ 33:17; 133:10, 19.
93 *ກ* ມທ 24:30;
ລກ 21:25–27.
ຄມພ ເຄື່ອງໝາຍ
ແຫ່ງການເວລາ.
94 *ກ* ຄມພ ມານ—ສາດສະ
ໜາຈັກຂອງມານ.
*ຂ* 1 ນຟ 13:4–9.
*ຄ* ພນມ 17:5.
*ງ* ພນມ 14:8.

ໃນທະເລ—ຈົ່ງເບິ່ງ, ນາງຄື [ຈ]ເຂົ້ານົກຂອງແຜ່ນດິນໂລກ; ນາງຖືກເຕົ້າໂຮມໄວ້ເປັນມັດໆ; ສາຍຮັດຂອງນາງຖືກເຮັດໃຫ້ແໜ້ນໜາ, ບໍ່ມີມະນຸດຄົນໃດຈະສາມາດແກ້ມັນອອກໄດ້; ສະນັ້ນ, ນາງຈຶ່ງພ້ອມແລ້ວທີ່ຈະຖືກ [ສ]ເຜົາ. ແລະ ເພິ່ນຈະເປົ່າແກຂອງເພິ່ນທັງຍາວນານ ແລະ ດັງ, ແລະ ທຸກປະຊາຊາດຈະໄດ້ຍິນ.

95 ແລະ ຈະມີ [ກ]ຄວາມງຽບສະຫງັດໃນສະຫວັນເປັນເວລາເຄິ່ງຊົ່ວໂມງ; ແລະ ໃນທັນທີຫລັງຈາກນັ້ນ ມ່ານແຫ່ງຟ້າສະຫວັນຈະມາຍອອກ, ດັ່ງ [ຂ]ມ້ວນກະດາດຖືກມາຍອອກຫລັງຈາກທີ່ຖືກມ້ວນໄວ້, ແລະ ພຣະຜູ້ເປັນເຈົ້າຈະເປີດ [ຄ]ພຣະພັກຂອງພຣະອົງ;

96 ແລະ ໄພ່ພົນຂອງພຣະເຈົ້າທີ່ຢູ່ເທິງແຜ່ນດິນໂລກ, ຜູ້ທີ່ມີຊີວິດຢູ່, ຈະຖືກເຮັດໃຫ້ມີຊີວິດຊີວາຄືນອີກ ແລະ ຖືກ [ກ]ພາຂຶ້ນໄປເຝົ້າພຣະອົງ.

97 ແລະ ຄົນທີ່ໄດ້ນອນຢູ່ໃນຫລຸມສົບຂອງພວກເຂົາຈະອອກ [ກ]ມາ, ເພາະຫລຸມສົບຂອງພວກເຂົາຈະຖືກເປີດ; ແລະ ພວກເຂົາຈະຖືກພາຂຶ້ນໄປເຝົ້າພຣະອົງ ໃນທ່າມກາງເສົາແຫ່ງຟ້າສະຫວັນຄືກັນ—

98 ພວກເຂົາເປັນຂອງພຣະຄຣິດ, ເປັນ [ກ]ຜົນທຳອິດ, ເປັນຜູ້ທີ່ຈະລົງໄປພ້ອມກັບພຣະອົງກ່ອນ, ແລະ ເປັນຜູ້ທີ່ຢູ່ເທິງແຜ່ນດິນໂລກ ແລະ ໃນຫລຸມສົບຂອງພວກເຂົາ, ເປັນຜູ້ທຳອິດທີ່ຖືກພາໄປເຝົ້າພຣະອົງກ່ອນ; ແລະ ທັງໝົດນີ້ໂດຍສຽງແກຂອງທູດຂອງພຣະເຈົ້າ.

99 ແລະ ຫລັງຈາກນີ້ ທູດອີກອົງໜຶ່ງຈະເປົ່າແກ, ຊຶ່ງເປັນແກໜ່ວຍທີສອງ; ແລະ ຈາກນັ້ນການໄຖ່ຄົນເຫລົ່ານັ້ນທີ່ເປັນຂອງພຣະຄຣິດຈະເກີດຂຶ້ນໃນຂະນະທີ່ພຣະອົງສະເດັດມາ; ຜູ້ທີ່ໄດ້ຮັບສ່ວນຂອງພວກເຂົາໃນ [ກ]ຄຸກ ຊຶ່ງໄດ້ຕຽມໄວ້ໃຫ້ພວກເຂົາ, ເພື່ອວ່າພວກເຂົາຈະໄດ້ຮັບພຣະກິດຕິຄຸນ, ແລະ ຖືກ [ຂ]ພິພາກສາຕາມມະນຸດໃນເນື້ອໜັງ.

100 ແລະ ອີກເທື່ອໜຶ່ງ, ແກອີກໜ່ວຍໜຶ່ງຈະດັງຂຶ້ນ, ຊຶ່ງເປັນແກໜ່ວຍທີສາມ; ແລະ ຈາກນັ້ນ [ກ]ວິນຍານຂອງມະນຸດ ຜູ້ທີ່ຈະຖືກພິພາກສາກໍຈະມາ, ແລະ ຖືກພົບວ່າຢູ່ພາຍໃຕ້ [ຂ]ການກ່າວໂທດ;

101 ແລະ ນີ້ຄື [ກ]ຄົນຕາຍທີ່ເຫລືອຢູ່; ແລະ ພວກເຂົາຈະບໍ່ມີຊີວິດອີກຈົນກວ່າ [ຂ]ພັນປີຜ່ານພົ້ນໄປ, ທັງບໍ່ມີຊີວິດອີກ, ຈົນກວ່າທີ່ສຸດຂອງແຜ່ນດິນໂລກ.

102 ແລະ ແກອີກໜ່ວຍໜຶ່ງຈະດັງຂຶ້ນ, ຊຶ່ງເປັນແກໜ່ວຍທີສີ່, ໂດຍກ່າວວ່າ: ຢູ່ໃນບັນດາຄົນເຫລົ່ານັ້ນ ທີ່ເຫລືອຢູ່ຈົນເຖິງວັນອັນຍິ່ງໃຫຍ່ ແລະ ສຸດທ້າຍ, ແມ່ນແຕ່ໃນການສິ້ນສຸດນັ້ນ, ຈະພົບເຫັນວ່າມີຜູ້ທີ່ຍັງຄົງ [ກ]ສົກກະປົກຢູ່ຄືເກົ່າ.

103 ແລະ ແກອີກໜ່ວຍໜຶ່ງຈະດັງຂຶ້ນ, ຊຶ່ງເປັນແກໜ່ວຍທີຫ້າ, ຊຶ່ງເປັນທູດອົງທີ

94 *ຈ* ມທ 13:38.
*ສ* ຄພ 64:23–24; 101:23–25. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
95 *ກ* ຄພ 38:12.
*ຂ* ພນມ 6:14.
*ຄ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
96 *ກ* 1 ທສນ 4:16–17.
97 *ກ* ຄພ 29:13; 45:45–46; 133:56. ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
98 *ກ* 1 ກຣທ 15:23.
99 *ກ* ຄພ 76:73; 138:8. ຄມພ ຄວາມລອດສຳລັບຄົນຕາຍ.
*ຂ* 1 ປຕ 4:6.
100 *ກ* ພນມ 20:12–13; ແອວ 11:41; ຄພ 43:18; 76:85.
*ຂ* ຄມພ ກ່າວໂທດ, ການກ່າວໂທດ.
101 *ກ* ພນມ 20:5.
*ຂ* ຄມພ ພັນປີ.
102 *ກ* ຄມພ ສົກກະປົກ, ຄວາມສົກກະປົກ.

ທ້າຜູ້ມອບໝາຍ [ກ]ພຣະກິດຕິຄຸນອັນເປັນນິດ—ເຫາະໄປໃນທ່າມກາງຟ້າສະຫວັນ, ສູ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ;

104 ແລະ ນີ້ຈະເປັນສຽງແກຂອງເພິ່ນ, ກ່າວຕໍ່ທຸກຜູ້ຄົນ, ທັງໃນຟ້າສະຫວັນ ແລະ ໃນແຜ່ນດິນໂລກ, ແລະ ທີ່ຢູ່ໃຕ້ແຜ່ນດິນໂລກ—ເພາະ [ກ]ທຸກຫູຈະໄດ້ຍິນມັນ, ແລະ ທຸກຫົວເຂົ່າຈະ [ຂ]ຄຸລົງ, ແລະ ທຸກລີ້ນຈະສາລະພາບ, ໃນຂະນະທີ່ພວກເຂົາໄດ້ຍິນສຽງແກ, ໂດຍກ່າວວ່າ: ຈົ່ງ [ຄ]ຢ້ານກົວພຣະເຈົ້າ, ແລະ ມອບລັດສະໝີພາບແດ່ພຣະອົງຜູ້ປະທັບຢູ່ເທິງພຣະບັນລັງ, ຕະຫລອດການ ແລະ ຕະຫລອດໄປ; ເພາະໂມງແຫ່ງການພິພາກສາຂອງພຣະອົງມາເຖິງແລ້ວ.

105 ແລະ ອີກເທື່ອໜຶ່ງ, ທູດອີກອົງໜຶ່ງຈະເປົ່າແກຂອງຕົນ, ຊຶ່ງເປັນທູດອົງທີຫົກ, ໂດຍກ່າວວ່າ: ນາງຜູ້ເຮັດໃຫ້ປະຊາຊາດທັງປວງດື່ມເຫລົ້າອະງຸ່ນແຫ່ງພຣະພິໂລດຈາກການລ່ວງປະເວນີຂອງນາງ [ກ]ຕົກແລ້ວ; ນາງຕົກແລ້ວ, ຕົກແລ້ວ!

106 ແລະ ອີກເທື່ອໜຶ່ງ, ທູດອີກອົງໜຶ່ງຈະເປົ່າແກຂອງຕົນ, ຊຶ່ງເປັນແກໜ່ວຍທີເຈັດ, ໂດຍກ່າວວ່າ: ສຳເລັດແລ້ວ; ສຳເລັດແລ້ວ! [ກ]ພຣະເມສານ້ອຍຂອງພຣະເຈົ້າໄດ້ [ຂ]ເອົາຊະນະ ແລະ ໄດ້ [ຄ]ຢຽບເຄື່ອງປັ່ນໝາກອະງຸ່ນຄົນດຽວ, ແມ່ນແຕ່ເຄື່ອງປັ່ນໝາກອະງຸ່ນແຫ່ງພຣະພິໂລດອັນຮ້າຍກາດຂອງພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່.

107 ແລະ ຈາກນັ້ນເຫລົ່າທູດຈະໄດ້ຮັບການສວມມົງກຸດດ້ວຍລັດສະໝີພາບລິດທານຸພາບຂອງພຣະອົງ, ແລະ [ກ]ໄພ່ພົນຂອງພຣະເຈົ້າຈະເຕັມໄປດ້ວຍ [ຂ]ລັດສະໝີພາບຂອງພຣະອົງ, ແລະ ໄດ້ຮັບ [ຄ]ມູນມໍລະດົກຂອງພວກເຂົາ ແລະ ຖືກເຮັດໃຫ້ [ງ]ເທົ່າທຽມກັບພຣະອົງ.

108 ແລະ ຈາກ ນັ້ນ ທູດ ອົງ ທຳ ອິດ ຈະເປົ່າແກຂອງຕົນອີກ ໃນຫູຂອງຄົນເປັນທຸກຄົນ, ແລະ [ກ]ເປີດເຜີຍການກະທຳລັບຂອງມະນຸດ, ແລະ ວຽກງານອັນຍິ່ງໃຫຍ່ຂອງພຣະເຈົ້າໃນ [ຂ]ພັນປີທຳອິດ.

109 ແລະ ຈາກນັ້ນທູດອົງທີສອງຈະເປົ່າແກຂອງຕົນ, ແລະ ເປີດເຜີຍການກະທຳລັບຂອງມະນຸດ, ແລະ ຄວາມນຶກຄິດ ແລະ ເຈດຕະນາໃນໃຈຂອງພວກເຂົາ, ແລະ ວຽກງານອັນຍິ່ງໃຫຍ່ຂອງພຣະເຈົ້າໃນພັນປີທີສອງ—

110 ແລະ ຕໍ່ໆໄປ, ຈົນກວ່າທູດອົງທີເຈັດຈະເປົ່າແກຂອງຕົນ; ແລະ ເພິ່ນຈະອອກມາຢືນຢູ່ເທິງແຜ່ນດິນ ແລະ ເທິງທະເລ, ແລະ ປະຕິຍານໃນພຣະນາມຂອງພຣະອົງຜູ້ປະທັບຢູ່ເທິງພຣະບັນລັງ, ວ່າ [ກ]ເວລາຈະບໍ່ມີອີກຕໍ່ໄປ; ແລະ [ຂ]ຊາຕານຈະຖືກມັດໄວ້, ງູດຶກດຳບັນໂຕນັ້ນ, ຜູ້ຖືກເອີ້ນວ່າມານ, ແລະ ຈະບໍ່ຖືກປ່ອຍໄປເປັນເວລາໜຶ່ງ [ຄ]ພັນປີ.

111 ແລະ ຈາກນັ້ນມັນຈະຖືກ [ກ]ປ່ອຍໄປ

103 *ກ* ພນມ 14:6–7.
ຄນພ ການຟື້ນຟູພຣະກິດຕິຄຸນ.
104 *ກ* ພນມ 5:13.
*ຂ* ອຊຢ 45:23; ຟລປ 2:9–11.
*ຄ* ຄນພ ຄາລະວະ, ຄວາມຄາລະວະ; ຢ້ານກົວ, ຄວາມຢ້ານກົວ—ຄວາມຢ້ານກົວພຣະເຈົ້າ.
105 *ກ* ພນມ 14:8; ຄພ 1:16.
106 *ກ* ຄນພ ພຣະເມສານ້ອຍຂອງພຣະເຈົ້າ.
*ຂ* 1 ກຣທ 15:25.
*ຄ* ອຊຢ 63:3–4; ພນມ 19:15; ຄພ 76:107; 133:50.
107 *ກ* ຄນພ ໄພ່ພົນຂອງພຣະເຈົ້າ.
*ຂ* ຄນພ ລັດສະໝີພາບຂອງຊັ້ນສູງ.
*ຄ* ຄນພ ສູງສົ່ງ, ຄວາມສູງສົ່ງ.
*ງ* ຄພ 76:95.
108 *ກ* ແອວ 37:25; ຄພ 1:3.
*ຂ* ຄພ 77:6–7.
110 *ກ* ຄພ 84:100.
*ຂ* ພນມ 20:1–3; 1 ນຟ 22:26; ຄພ 101:28. ຄນພ ມານ.
*ຄ* ຄນພ ພັນປີ.
111 *ກ* ຄພ 29:22; 43:30–31.

ຊົ່ວໄລຍະໜຶ່ງ, ເພື່ອວ່າມັນຈະໄດ້ເຕົ້າໂຮມ
ກອງທັບຂອງມັນ.
112 ແລະ [ກ]ມີຄາເອນ, ທູດ ອົງ ທີ ເຈັດ,
ແມ່ນແຕ່ຫົວໜ້າທູດ, ຈະເຕົ້າໂຮມກອງທັບ
ຂອງເພິ່ນ, ແມ່ນແຕ່ ໄພ່ພົນຂອງສະຫວັນ.
113 ແລະ ມານ ຈະ ເຕົ້າ ໂຮມ ກອງທັບ
ຂອງ ມັນ; ແມ່ນແຕ່ໄພ່ພົນ ຂອງ ນະລົກ,
ແລະ ຈະຂຶ້ນມາສູ້ຮົບກັບມີຄາເອນ ແລະ
ກອງທັບຂອງເພິ່ນ.
114 ແລະ ຈາກນັ້ນ [ກ]ການສູ້ຮົບ ອັນ ຍິ່ງ
ໃຫຍ່ຂອງພຣະເຈົ້າຈະເກີດຂຶ້ນ; ແລະ ມານ
ແລະ ກອງທັບຂອງມັນຈະຖືກຂັບໄລ່ອອກ
ໄປຫາບ່ອນຂອງພວກມັນເອງ, ເພື່ອວ່າ
ພວກມັນຈະບໍ່ມີອຳນາດເໜືອໄພ່ພົນຂອງ
ພຣະເຈົ້າອີກຕໍ່ໄປຈັກເທື່ອ.
115 ເພາະ ມີຄາເອນ ຈະ ສູ້ ຮົບ ໃຫ້
ພວກເຂົາ, ແລະ ຈະເອົາຊະນະຜູ້ນັ້ນທີ່
[ກ]ສະແຫວງຫາພຣະບັນລັງ ຂອງພຣະອົງຜູ້
ປະທັບຢູ່ເທິງພຣະບັນລັງ, ແມ່ນແຕ່ພຣະ
ເມສານ້ອຍ.
116 ນີ້ຄືລັດສະໝີພາບຂອງພຣະເຈົ້າ,
ແລະ ຄົນທີ່ໄດ້ຮັບ [ກ]ການຊຳລະໃຫ້ບໍລິສຸດ
ແລ້ວ; ແລະ ພວກເຂົາຈະບໍ່ເຫັນ [ຂ]ຄວາມ
ຕາຍອີກຕໍ່ໄປ.
117 ສະນັ້ນ, ຕາມ ຄວາມ ຈິງ ແລ້ວ ເຮົາ
ກ່າວກັບພວກເຈົ້າ, [ກ]ເພື່ອນທັງຫລາຍຂອງ
ເຮົາວ່າ ຈົ່ງເອີ້ນໃຫ້ມີການຊຸມນຸມທີ່ສັກສິດ,
ດັ່ງທີ່ເຮົາໄດ້ບັນຊາພວກເຈົ້າ.
118 ແລະ ເນື່ອງ ຈາກວ່າຄົນທັງປວງບໍ່
ມີສັດທາ, ພວກເຈົ້າຈົ່ງສະແຫວງຫາຢ່າງ
ພາກພຽນ ແລະ [ກ]ສິດສອນຖ້ອຍຄຳແຫ່ງ
ປັນຍາໃຫ້ກັນແລະກັນ; ແທ້ຈິງແລ້ວ, ພວກ
ເຈົ້າຈົ່ງສະແຫວງຫາຖ້ອຍຄຳແຫ່ງ [ຂ]ປັນຍາ
ຢູ່ໃນ [ຄ]ປຶ້ມທີ່ດີທີ່ສຸດ; ຈົ່ງສະແຫວງຫາການ
ຮຽນຮູ້, ແມ່ນແຕ່ໂດຍການສຶກສາ ແລະ
ໂດຍສັດທານຳອີກ.
119 ຈົ່ງ ວາງ ລະບຽບ ຕົນ ເອງ; ຕຽມ ສິ່ງ
ທີ່ ຈຳ ເປັນ ທຸກ ຢ່າງ; ແລະ ສະຖາປະນາ
[ກ]ບ້ານ, ແມ່ນແຕ່ບ້ານແຫ່ງການອະທິຖານ,
ບ້ານແຫ່ງການຖືສິນອົດເຂົ້າ, ບ້ານແຫ່ງ
ສັດທາ, ບ້ານແຫ່ງການຮຽນຮູ້, ບ້ານແຫ່ງ
ລັດສະໝີພາບ, ບ້ານແຫ່ງລະບຽບ, ບ້ານ
ຂອງພຣະເຈົ້າ;
120 ເພື່ອວ່າການເຂົ້າມາຂອງພວກເຈົ້າ
ຈະເປັນໄປໃນພຣະນາມຂອງພຣະຜູ້ເປັນ
ເຈົ້າ; ເພື່ອວ່າການອອກໄປຂອງພວກເຈົ້າ
ຈະເປັນໄປໃນພຣະນາມຂອງພຣະຜູ້ເປັນ
ເຈົ້າ; ເພື່ອວ່າການທັກທາຍທັງໝົດຂອງ
ພວກເຈົ້າຈະເປັນໄປໃນພຣະນາມຂອງ
ພຣະຜູ້ເປັນເຈົ້າ, ດ້ວຍມືທີ່ຍົກຂຶ້ນແດ່ພຣະ
ຜູ້ສູງສຸດ.
121 ສະນັ້ນ, ຈົ່ງ [ກ]ຢຸດ ຈາກ ການ ເວົ້າ
ຫລິ້ນໆທັງໝົດຂອງພວກເຈົ້າ, ຈາກ [ຂ]ການ
ຫົວເຮຮາທັງໝົດ, ຈາກຄວາມປາດຖະໜາ
ທີ່ [ຄ]ຕັນຫາລາມົກທັງໝົດຂອງພວກເຈົ້າ,
ຈາກ [ງ]ຄວາມທະນົງຕົວ ແລະ ຄວາມບໍ່ເອົາ

112 *ກ* ຄນພ ມີຄາເອນ.
114 *ກ* ພນມ 16:14.
115 *ກ* ອຊຢ 14:12–17;
ມຊ 4:1–4.
116 *ກ* ຄນພ ສູງສົ່ງ, ຄວາມສູງສົ່ງ;
ຊຳລະໃຫ້ບໍລິສຸດ, ການ
ຊຳລະໃຫ້ບໍລິສຸດ.
*ຂ* ພນມ 21:4;
ແອວ 11:45; 12:18;
ຄພ 63:49.
ຄນພ ອະມະຕະ, ຄວາມ
ເປັນອະມະຕະ.
117 *ກ* ຄພ 109:6.
118 *ກ* ຄພ 88:76–80.
ຄນພ ສອນ, ຜູ້
ສອນ, ຄູສອນ.
*ຂ* ຄນພ ສະຕິປັນຍາ.
*ຄ* ຄພ 55:4; 109:7, 14.
119 *ກ* ຄພ 95:3; 97:10–17;
109:2–9; 115:8.
ຄນພ ພຣະວິຫານ, ບ້ານ
ຂອງພຣະຜູ້ເປັນເຈົ້າ.
121 *ກ* ຄພ 43:34; 100:7.
*ຂ* ຄພ 59:15; 88:69.
*ຄ* ຄນພ ການມະລົມ.
*ງ* ຄນພ ຈອງຫອງ,
ຄວາມຈອງຫອງ.

ໃຈໃສ່ທັງໝົດຂອງພວກເຈົ້າ, ແລະ ຈາກການເຮັດສິ່ງຊົ່ວຮ້າຍທັງໝົດຂອງພວກເຈົ້າ.

122 ຈົ່ງກໍານົດໃຫ້ມີຜູ້ສອນໃນບັນດາພວກເຈົ້າ, ແລະ ບໍ່ໃຫ້ທຸກຄົນເປັນຜູ້ເວົ້າພ້ອມກັນ; ແຕ່ໃຫ້ເວົ້າເທື່ອລະຄົນ ແລະ ໃຫ້ທຸກຄົນຟັງສິ່ງທີ່ລາວເວົ້າ, ເພື່ອວ່າເມື່ອທຸກຄົນໄດ້ເວົ້າ ແລ້ວທຸກຄົນຈະໄດ້ຮັບການເສີມສ້າງຈາກທຸກຄົນ, ແລະ ວ່າທຸກຄົນຈະມີສິດທິພິເສດທີ່ເທົ່າທຽມກັນ.

123 ຈົ່ງເບິ່ງວ່າພວກເຈົ້າ [ກ]ຮັກກັນ; ເຊົາ [ຂ]ໂລບ; ຮຽນທີ່ຈະແບ່ງປັນໃຫ້ກັນດັ່ງທີ່ພຣະກິດຕິຄຸນຮຽກຮ້ອງ.

124 ເຊົາ [ກ]ກຽດຄ້ານ; ເຊົາບໍ່ສະອາດ; ເຊົາ [ຂ]ຈັບຜິດກັນ; ເຊົານອນເກີນຄວາມຈໍາເປັນ; ໃຫ້ເຂົ້ານອນແຕ່ຫົວຄ່ໍາ, ເພື່ອວ່າພວກເຈົ້າຈະບໍ່ເມື່ອຍເພຍ; ໃຫ້ຕື່ນແຕ່ເຊົ້າ, ເພື່ອຮ່າງກາຍຂອງພວກເຈົ້າ ແລະ ຈິດໃຈຂອງພວກເຈົ້າຈະສົດຊື່ນ.

125 ແລະ ເໜືອກວ່າທຸກສິ່ງທັງປວງ, ຈົ່ງຫຸ້ມຫໍ່ຕົນເອງດ້ວຍພັນທະ [ກ]ແຫ່ງຄວາມໃຈບຸນ, ເຊັ່ນດຽວກັບເສື້ອຄຸມ, ຊຶ່ງເປັນພັນທະແຫ່ງຄວາມດີພ້ອມ ແລະ [ຂ]ສັນຕິສຸກ.

126 ຈົ່ງ [ກ]ອະທິຖານສະເໝີ, ເພື່ອວ່າພວກເຈົ້າຈະບໍ່ທໍ້ຖອຍໃຈ, ຈົນກວ່າເຮົາຈະ [ຂ]ມາ. ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາຈະມາຢ່າງໄວ, ແລະ ຮັບເອົາພວກເຈົ້າໄວ້ກັບຕົວເຮົາ. ອາແມນ.

127 ແລະ ອີກເທື່ອໜຶ່ງ, ລະບຽບຂອງບ້ານທີ່ຕຽມໄວ້ໃຫ້ຝ່າຍປະທານຂອງ [ກ]ໂຮງຮຽນຂອງສາດສະດາ, ຖືກຈັດຕັ້ງຂຶ້ນເພື່ອເປັນຄໍາແນະນໍາຂອງພວກເຂົາ ເຖິງສິ່ງທັງປວງທີ່ສົມຄວນສໍາລັບພວກເຂົາ, ແມ່ນແຕ່ສໍາລັບ [ຂ]ເຈົ້າໜ້າທີ່ທັງຫລາຍຂອງສາດສະໜາຈັກ, ຫລື ອີກຄໍາໜຶ່ງ, ຄົນເຫລົ່ານັ້ນທີ່ຖືກເອີ້ນໃຫ້ມາປະຕິບັດສາດສະໜາກິດໃນສາດສະໜາຈັກ, ໂດຍເລີ່ມຕົ້ນຈາກມະຫາປະໂລຫິດ, ແມ່ນແຕ່ລົງໄປເຖິງມັກຄະນາຍົກ—

128 ແລະ ນີ້ຈະເປັນລະບຽບຂອງບ້ານຂອງຝ່າຍປະທານຂອງໂຮງຮຽນ: ຄົນທີ່ໄດ້ຖືກກໍານົດໃຫ້ເປັນປະທານ, ຫລື ຄູສອນ, ຈະຖືກພົບຢູ່ໃນສະຖານທີ່ຂອງເຂົາ, ໃນບ້ານທີ່ໄດ້ຈັດໄວ້ໃຫ້ເຂົາ.

129 ສະນັ້ນ, ເຂົາຈຶ່ງເປັນຄົນທໍາອິດຢູ່ໃນບ້ານຂອງພຣະເຈົ້າ, ໃນສະຖານທີ່ທີ່ຜູ້ມາປະຊຸມໃນບ້ານຈະໄດ້ຍິນຖ້ອຍຄໍາຂອງເຂົາຢ່າງລະອຽດ ແລະ ແຈ່ມແຈ້ງ, ບໍ່ແມ່ນດ້ວຍການເວົ້າສຽງດັງ.

130 ແລະ ເມື່ອເຂົາເຂົ້າມາໃນບ້ານຂອງພຣະເຈົ້າ, ເພາະເຂົາຄວນເປັນຄົນທໍາອິດຢູ່ໃນບ້ານ—ຈົ່ງເບິ່ງ, ນີ້ເປັນສິ່ງທີ່ງົດງາມ, ເພື່ອວ່າເຂົາຈະໄດ້ເປັນຕົວຢ່າງ—

131 ໃຫ້ເຂົາ [ກ]ຖວາຍຕົນໃນການອະທິຖານ ໂດຍການຄຸເຂົ່າຢູ່ຕໍ່ພຣະພັກຂອງພຣະເຈົ້າ, ເປັນເຄື່ອງໝາຍສໍາຄັນ ຫລື ເປັນການລະນຶກເຖິງພັນທະສັນຍາອັນເປັນນິດ.

132 ແລະ ເມື່ອຄົນໃດຈະເຂົ້າມາຫລັງຈາກເຂົາ, ກໍໃຫ້ຜູ້ສອນລຸກຂຶ້ນ, ແລະ ດ້ວຍມືທີ່ຍົກຂຶ້ນສູ່ຟ້າສະຫວັນ; ແທ້ຈິງແລ້ວ, ແມ່ນຊື່ຕົງ, ຕ້ອນຮັບອ້າຍນ້ອງບາງຄົນ ຫລື ພີ່ນ້ອງທັງຫລາຍດ້ວຍຖ້ອຍຄໍາເຫລົ່ານີ້:

---

123 *ກ* ຄມພ ຮັກ, ຄວາມຮັກ.
*ຂ* ຄມພ ໂລບ, ຄວາມໂລບ.
124 *ກ* ຄມພ ກຽດຄ້ານ, ຄວາມກຽດຄ້ານ.
*ຂ* ຄພ 64:7–10. ຄມພ ເວົ້າຈາບໍ່ດີ.
125 *ກ* ຄມພ ໃຈບຸນ, ຄວາມໃຈບຸນ.
*ຂ* ຄມພ ສະຫງົບ, ຄວາມສະຫງົບ.
126 *ກ* ຄມພ ອະທິຖານ, ການອະທິຖານ, ຄໍາອະທິຖານ.
*ຂ* ຄພ 1:12.
127 *ກ* ຄມພ ໂຮງຮຽນຂອງສາດສະດາ.
*ຂ* ຄມພ ຕໍາແໜ່ງ, ເຈົ້າໜ້າທີ່.
131 *ກ* ຄມພ ນະມັດສະການ.

133 ທ່ານເປັນອ້າຍນ້ອງ ຫລື ທ່ານເປັນ
ພີ່ນ້ອງທັງຫລາຍບໍ? ຂ້າພະເຈົ້າຕ້ອນຮັບ
ທ່ານໃນພຣະນາມຂອງ ອົງພຣະເຢຊູຄຣິດ
ເຈົ້າ, ເປັນເຄື່ອງໝາຍສຳຄັນ ຫລື ເປັນ
ການລະນຶກເຖິງພັນທະສັນຍາອັນເປັນນິດ,
ຊຶ່ງພັນທະສັນຍານັ້ນ ຂ້າພະເຈົ້າໄດ້ຮັບ
ເອົາທ່ານເປັນ [ກ]ເພື່ອນຮ່ວມສະມາຊິກ, ໃນ
ຄວາມຕັ້ງໃຈທີ່ໝັ້ນຄົງ, ບໍ່ຫວັ່ນໄຫວ, ແລະ
ບໍ່ປ່ຽນແປງ, ເພື່ອເປັນເພື່ອນ ແລະ [ຂ]ອ້າຍ
ນ້ອງຂອງທ່ານ ໂດຍທາງພຣະຄຸນຂອງ
ພຣະເຈົ້າໃນພັນທະການແຫ່ງຄວາມຮັກ,
ເພື່ອດຳເນີນຊີວິດໃນພຣະບັນຍັດຂອງ
ພຣະເຈົ້າໂດຍບໍ່ມີຂໍ້ຕຳນິ, ໃນຄວາມຂອບ
ພຣະໄທ, ຕະຫລອດການ ແລະ ຕະຫລອດ
ໄປ. ອາແມນ.
134 ແລະ ຄົນທີ່ຖືກພົບວ່າບໍ່ມີຄຸນຄ່າສົມ
ກັບການຕ້ອນຮັບນີ້ ຈະບໍ່ມີບ່ອນຢູ່ໃນບັນ
ດາພວກເຈົ້າ; ເພາະພວກເຈົ້າຈະບໍ່ຄວນ
ຍອມໃຫ້ບ້ານຂອງເຮົາ [ກ]ສົກກະປົກໂດຍ
ຄົນຜູ້ນັ້ນ.
135 ແລະ ຄົນທີ່ເຂົ້າມາ ແລະ ຊື່ສັດຕໍ່
ໜ້າເຮົາ, ແລະ ເປັນອ້າຍນ້ອງ, ຫລື ຖ້າ
ພວກເຂົາເປັນພີ່ນ້ອງທັງຫລາຍ, ພວກເຂົາ
ຈະຕ້ອນຮັບປະທານ ຫລື ຜູ້ສອນດ້ວຍມືທີ່
ຍົກຂຶ້ນຊື່ຫາຟ້າສະຫວັນ, ດ້ວຍການອະທິ
ຖານ ແລະ ພັນທະສັນຍາດຽວກັນນີ້, ຫລື
ໂດຍກ່າວ ອາແມນ, ເປັນເຄື່ອງໝາຍສຳ
ຄັນເຖິງສິ່ງດຽວກັນ.
136 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ, ເຮົາ
ກ່າວກັບພວກເຈົ້າວ່າ ນີ້ຄືຕົວຢ່າງແກ່ພວກ
ເຈົ້າເພື່ອຕ້ອນຮັບກັນໃນບ້ານຂອງພຣະ
ເຈົ້າ, ໃນໂຮງຮຽນຂອງສາດສະດາ.
137 ແລະ ພວກເຈົ້າ ໄດ້ຖືກເອີ້ນໃຫ້
ມາເຮັດສິ່ງນີ້ໂດຍການອະທິຖານ ແລະ
ຄວາມຂອບພຣະໄທ, ໃນຂະນະທີ່ພຣະ
ວິນຍານຈະປະທານໃຫ້ເອີ່ຍປາກໃນການ
ເຮັດທຸກສິ່ງທຸກຢ່າງຢູ່ໃນບ້ານຂອງພຣະ
ຜູ້ເປັນເຈົ້າ, ໃນໂຮງຮຽນຂອງສາດສະ
ດາ, ເພື່ອວ່າມັນຈະກາຍເປັນບ່ອນລີ້ໄພ,
ເປັນສະຖານທີ່ນະມັດສະການຂອງພຣະ
ວິນຍານສັກສິດ ເພື່ອ [ກ]ການເສີມສ້າງ
ພວກເຈົ້າ.
138 ແລະ ພວກເຈົ້າຈະບໍ່ຮັບເອົາຄົນໜຶ່ງ
ຄົນໃດໃນບັນດາພວກເຈົ້າມາເຂົ້າໂຮງຮຽນ
ນີ້ ເວັ້ນເສຍແຕ່ເຂົາສະອາດຈາກ [ກ]ເລືອດ
ຂອງຄົນລຸ້ນນີ້;
139 ແລະ ເຂົາຈະຖືກຮັບເຂົ້າໂດຍພິທີ
ການລ້າງຕີນ, ເພາະເພື່ອຈຸດປະສົງນີ້ ທີ່ພິ
ທີການ [ກ]ລ້າງຕີນຈຶ່ງຖືກຈັດຕັ້ງຂຶ້ນ.
140 ແລະ ອີກເທື່ອໜຶ່ງ, ພິທີການລ້າງ
ຕີນຕ້ອງຖືກປະຕິບັດໂດຍປະທານ ຫລື
ແອວເດີທີ່ຄວບຄຸມຂອງສາດສະໜາຈັກ.
141 ຕ້ອງເລີ່ມຕົ້ນດ້ວຍການອະທິຖານ;
ແລະ ຫລັງຈາກໄດ້ [ກ]ຮັບສ່ວນເຂົ້າຈີ່ ແລະ
ເຫລົ້າອະງຸ່ນແລ້ວ, ເຂົາຕ້ອງຄາດແອວ
ຕາມ [ຂ]ແບບແຜນທີ່ຖືກມອບໃຫ້ ໃນບົດ
ທີສິບສາມຂອງພຣະທຳໂຢຮັນກ່ຽວກັບ
ເຮົາ. ອາແມນ.

133 *ກ* ຄມພ ຜູກມິດ.
*ຂ* ຄມພ ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ; ເອື້ອຍນ້ອງ.
134 *ກ* ຄພ 97:15–17; 110:7–8.
137 *ກ* ຄພ 50:21–24.
138 *ກ* ຄພ 88:74–75, 84–85.
139 *ກ* ຄມພ ຊຳລະລ້າງ, ຖືກຊຳລະລ້າງ, ການຊຳລະລ້າງ.
141 *ກ* ຄມພ ສິນລະລຶກ.
*ຂ* ຢຮ 13:4–17.

# ພາກທີ 89

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 27 ເດືອນກຸມພາ, 1833. ດ້ວຍເຫດວ່າພວກອ້າຍນ້ອງໃນສະໄໝເລີ່ມຕົ້ນໄດ້ໃຊ້ຢາດູດຢູ່ໃນການປະຊຸມຂອງເຂົາເຈົ້າ, ສາດສະດາຈຶ່ງໄດ້ຮັບການແນະນຳໃຫ້ໄຕ່ຕອງກ່ຽວກັບເລື່ອງນີ້; ດັ່ງນັ້ນ, ເພິ່ນຈຶ່ງໄດ້ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບເລື່ອງນີ້. ການເປີດເຜີຍເທື່ອນີ້, ຊຶ່ງຮູ້ຈັກກັນວ່າເປັນ ພຣະວາຈາແຫ່ງປັນຍາ, ຄືຜົນທີ່ຕາມມາ.*

*1–9, ການໃຊ້ເຫລົ້າອະງຸ່ນ, ເຫລົ້າປຸກ, ຢາດູດ, ແລະ ເຄື່ອງດື່ມຮ້ອນຖືກສັ່ງຫ້າມ; 10–17, ສະໝຸນໄພ, ໝາກໄມ້, ຊີ້ນ, ແລະ ເມັດພືດຖືກກຳນົດໄວ້ເພື່ອຜົນປະໂຫຍດຂອງມະນຸດ ແລະ ສັດສາວາສິ່ງ; 18–21, ການເຊື່ອຟັງກົດຂອງພຣະກິດຕິຄຸນ, ລວມທັງພຣະວາຈາແຫ່ງປັນຍາ, ຈະນຳພອນຝ່າຍໂລກ ແລະ ຝ່າຍວິນຍານມາໃຫ້.*

1 [ກ]ພຣະວາຈາແຫ່ງປັນຍາ, ເພື່ອຜົນປະໂຫຍດຂອງສະພາມະຫາປະໂລຫິດ, ຊຶ່ງຊຸມນຸມກັນຢູ່ໃນເມືອງເຄີດແລນ, ແລະສາດສະໜາຈັກ, ແລະ ໄພ່ພົນຂອງພຣະເຈົ້າໃນຊີໂອນນຳອີກ—

2 ເພື່ອສົ່ງຄວາມປາດຖະໜາດີ; ບໍ່ແມ່ນໂດຍພຣະບັນຍັດ ຫລື ຂໍ້ບັງຄັບ, ແຕ່ໂດຍການເປີດເຜີຍ ແລະ ພຣະວາຈາແຫ່ງປັນຍາ, ໂດຍສະແດງເຖິງລະບຽບ ແລະ [ກ]ພຣະປະສົງຂອງພຣະເຈົ້າກ່ຽວກັບຄວາມລອດໃນຝ່າຍໂລກຂອງໄພ່ພົນທັງໝົດຂອງພຣະເຈົ້າໃນຍຸກສຸດທ້າຍ—

3 ປະທານໃຫ້ເພື່ອເປັນຫລັກທຳພ້ອມດ້ວຍ [ກ]ຄຳສັນຍາ, ຊຶ່ງໄດ້ປັບໃຫ້ເຂົ້າກັບຄວາມສາມາດຂອງຄົນອ່ອນແອ ແລະ ຄົນອ່ອນແອທີ່ສຸດໃນບັນດາ [ຂ]ໄພ່ພົນທັງໝົດຂອງພຣະເຈົ້າ, ຜູ້ທີ່ເປັນ ຫລື ສາມາດຖືກເອີ້ນວ່າໄພ່ພົນຂອງພຣະເຈົ້າ.

4 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບພວກເຈົ້າ: ເປັນເພາະ [ກ]ຄວາມຊົ່ວຮ້າຍ ແລະ ແຜນການຊຶ່ງມີຢູ່ ແລະ ຈະມີຢູ່ໃນຫົວໃຈຂອງມະນຸດທີ່ [ຂ]ວາງແຜນຮ້າຍໃນຍຸກສຸດທ້າຍ, ເຮົາຈຶ່ງໄດ້ [ຄ]ເຕືອນພວກເຈົ້າ, ແລະ ເຕືອນພວກເຈົ້າລ່ວງໜ້າ, ໂດຍໃຫ້ພຣະວາຈາແຫ່ງປັນຍາແກ່ພວກເຈົ້າໂດຍການເປີດເຜີຍ—

5 ວ່າຕາບໃດທີ່ຄົນໃດຄົນໜຶ່ງດື່ມ [ກ]ເຫລົ້າອະງຸ່ນ ຫລື ດື່ມເຫລົ້າປຸກໃນບັນດາພວກເຈົ້າ, ຈົ່ງເບິ່ງ ມັນບໍ່ດີ, ທັງບໍ່ຖືກຕ້ອງໃນສາຍພຣະເນດຂອງພຣະບິດາຂອງພວກເຈົ້າ, ເວັ້ນເສຍແຕ່ຢູ່ໃນການຮ່ວມຊຸມນຸມຂອງພວກເຈົ້າ ເພື່ອຖວາຍສິນລະລຶກຂອງພວກເຈົ້າຕໍ່ພຣະພັກຂອງພຣະອົງ.

6 ແລະ, ຈົ່ງເບິ່ງ, ນີ້ຄວນເປັນເຫລົ້າອະງຸ່ນ, ແທ້ຈິງແລ້ວ, ເປັນເຫລົ້າອະງຸ່ນ [ກ]ບໍລິສຸດຈາກໝາກອະງຸ່ນຈາກຕົ້ນຂອງມັນ, ຊຶ່ງພວກເຈົ້າໄດ້ເຮັດ.

---

**89** 1 *ກ* ຄມພ ພຣະວາຈາແຫ່ງປັນຍາ.
2 *ກ* ຄພ 29:34.
ຄມພ ພຣະບັນຍັດຂອງພຣະເຈົ້າ.
3 *ກ* ຄພ 89:18–21.
*ຂ* ຄມພ ໄພ່ພົນຂອງພຣະເຈົ້າ.
4 *ກ* ຄມພ ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.
*ຂ* ຄມພ ການມົ້ວສຸມລັບ.
*ຄ* ຄມພ ເຕືອນ, ຄຳເຕືອນ.
5 *ກ* ລລວ 10:9–11; ອຊຢ 5:11–12; 1 ກຣທ 6:10.
6 *ກ* ຄພ 27:1–4.

7 ແລະ, ອີກເທື່ອໜຶ່ງ, [ກ]ເຫລົ້າປຸກບໍ່ແມ່ນ
ສຳລັບທ້ອງ, ແຕ່ແມ່ນສຳລັບການລ້າງຮ່າງ
ກາຍຂອງພວກເຈົ້າ.
8 ແລະ ອີກເທື່ອໜຶ່ງ, ຢາດູດບໍ່ແມ່ນສຳ
ລັບ [ກ]ຮ່າງກາຍ, ທັງບໍ່ແມ່ນສຳລັບທ້ອງ,
ແລະ ບໍ່ດີສຳລັບມະນຸດ, ແຕ່ເປັນສະໝຸນ
ໄພສຳລັບແຜຟົກຊ້ຳ ແລະ ສັດທີ່ເຈັບປ່ວຍ
ທັງໝົດ, ຊຶ່ງໃຫ້ໃຊ້ດ້ວຍຄວາມພິຈາລະນາ
ແລະ ຄວາມຊຳນານ.
9 ແລະ ອີກເທື່ອໜຶ່ງ, ເຄື່ອງດື່ມຮ້ອນ
ແມ່ນບໍ່ດີສຳລັບຮ່າງກາຍ ຫລື ທ້ອງ.
10 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ [ກ]ສະໝຸນ
ໄພທີ່ມີປະໂຫຍດທັງໝົດ ພຣະເຈົ້າໄດ້
ກຳນົດໄວ້ສຳລັບສຸຂະພາບ, ທຳມະຊາດ,
ແລະ ຜົນປະໂຫຍດຂອງມະນຸດ—
11 ສະໝຸນໄພທັງໝົດໃນລະດູຂອງມັນ,
ແລະ ໝາກໄມ້ທັງໝົດໃນລະດູຂອງມັນ;
ທັງໝົດເຫລົ່ານີ້ມີໃຫ້ໃຊ້ດ້ວຍຄວາມຮອບ
ຄອບ ແລະ ດ້ວຍ [ກ]ຄວາມຂອບພຣະໄທ.
12 ແທ້ຈິງແລ້ວ, [ກ]ຊີ້ນຂອງ [ຂ]ສັດ ແລະ
ຂອງສັດມີປີກໃນອາກາດ, ເຮົາ, ພຣະຜູ້
ເປັນເຈົ້າ, ໄດ້ກຳນົດໄວ້ເພື່ອຜົນປະໂຫຍດ
ຂອງມະນຸດດ້ວຍຄວາມຂອບພຣະໄທ;
ເຖິງຢ່າງໃດກໍຕາມ ມັນຄວນຖືກນຳໃຊ້
ດ້ວຍ [ຄ]ຄວາມປະຢັດເທົ່ານັ້ນ;
13 ແລະ ມັນຈະເປັນທີ່ພໍໃຈແກ່ເຮົາທີ່ຈະ
ບໍ່ໃຊ້ມັນ, ຍົກເວັ້ນແຕ່ໃນລະດູໜາວ, ຫລື
ໃນເວລາອາກາດເຢັນ, ຫລື ໃນຍາມອຶດ
ຢາກເທົ່ານັ້ນ.
14 [ກ]ເມັດພືດທຸກຊະນິດໄດ້ຖືກແຕ່ງຕັ້ງ
ໄວ້ເພື່ອປະໂຫຍດຂອງມະນຸດ ແລະ ສັດ
ສາວາສິ່ງ, ເພື່ອເປັນໄມ້ຄ້ຳຊີວິດ, ບໍ່ພຽງແຕ່
ສຳລັບມະນຸດເທົ່ານັ້ນ ແຕ່ສຳລັບສັດຢູ່ໃນ
ທົ່ງນາອີກ, ແລະ ຝູງນົກຂອງຟ້າສະຫວັນ,
ແລະ ສັດສາວາສິ່ງທຸກຊະນິດທີ່ແລ່ນ ຫລື
ເລືອຄານຢູ່ເທິງແຜ່ນດິນໂລກ;
15 ແລະ ສິ່ງເຫລົ່ານີ້ພຣະເຈົ້າໄດ້ສ້າງສຳ
ລັບຜົນປະໂຫຍດຂອງມະນຸດ ໃນເວລາທີ່ມີ
ຄວາມອຶດຢາກ ແລະ ຫິວໂຫຍເທົ່ານັ້ນ.
16 ເມັດພືດທຸກຊະນິດແມ່ນດີສຳລັບ
ເປັນອາຫານຂອງມະນຸດ; ທັງໝາກໄມ້
ຈາກເຄືອກໍຄືກັນ; ສິ່ງທີ່ອອກໝາກ, ບໍ່ວ່າ
ໃນພື້ນດິນ ຫລື ເທິງພື້ນດິນກໍຕາມ—
17 ເຖິງຢ່າງໃດກໍຕາມ, ເຂົ້າຫວີດແມ່ນ
ສຳລັບມະນຸດ, ແລະ ເຂົ້າສາລີແມ່ນສຳລັບ
ງົວ, ແລະ ເຂົ້າໂອດແມ່ນສຳລັບມ້າ, ແລະ
ເຂົ້າຣາຍແມ່ນສຳລັບສັດມີປີກ ແລະ ສຳ
ລັບໝູ, ແລະ ສຳລັບສັດທັງໝົດຢູ່ໃນທົ່ງ,
ແລະ ເຂົ້າບາເລແມ່ນສຳລັບສັດທີ່ມີປະ
ໂຫຍດທັງປວງ, ແລະ ສຳລັບເຄື່ອງດື່ມ
ອ່ອນໆ, ດັ່ງເມັດພືດຊະນິດອື່ນໆ.
18 ແລະ ໄພ່ພົນທັງປວງຂອງພຣະເຈົ້າ
ຜູ້ທີ່ຈື່ຈຳທີ່ຈະຮັກສາ ແລະ ເຮັດຕາມສິ່ງທີ່
ກ່າວມານີ້, ໂດຍການດຳເນີນໄປໃນການ
ເຊື່ອຟັງບັນຍັດ, ຈະໄດ້ [ກ]ຮັບພະລານາໄມ
ໃນຮູສາຍບືຂອງພວກເຂົາ ແລະ ມີໄຂໃນ
ກະດູກຂອງພວກເຂົາ;
19 ແລະ ຈະພົບ [ກ]ສະຕິປັນຍາ ແລະ ຂຸມ
ຊັບແຫ່ງ [ຂ]ຄວາມຮູ້, ແມ່ນແຕ່ເປັນຂຸມຊັບທີ່
ເຊື່ອງຊ້ອນຢູ່;
20 ແລະ ຈະ [ກ]ແລ່ນ ແລະ ບໍ່ເມື່ອຍລ້າ,

7 *ກ* ສພສ 20:1; 23:29–35.
8 *ກ* 1 ກຣທ 3:16–17.
ຄມພ ຮ່າງກາຍ.
10 *ກ* ອສ ພືດພັນ. ປຖກ 1:29;
ຄພ 59:17–20.
11 *ກ* ຄມພ ຂອບຄຸນ, ຂອບ
ໃຈ, ຄວາມຂອບຄຸນ.
12 *ກ* ປຖກ 9:3;
ລລວ 11:1–8.
*ຂ* 1 ຕມທ 4:3–4;
ຄພ 49:18–21.
*ຄ* ຄພ 59:20.
14 *ກ* ດນອ 1:6–20.
18 *ກ* ສພສ 3:8.
19 *ກ* ຄມພ ສະຕິປັນຍາ.
*ຂ* ຄມພ ຄວາມຮູ້;
ປະຈັກພະຍານ.
20 *ກ* ອຊຢ 40:31.

ແລະ ຈະຍ່າງ ແລະ ບໍ່ເປັນລົມ.
21 ແລະ ເຮົາ, ພຣະຜູ້ເປັນເຈົ້າ, ມອບ
[ກ]ຄຳສັນຍານີ້ໃຫ້ແກ່ພວກເຂົາ, ວ່າທູດຜູ້ທຳ
ລາຍຈະ [ຂ]ຜ່ານພວກເຂົາໄປ, ດັ່ງລູກຫລານ
ຂອງອິດສະຣາເອນ, ແລະ ບໍ່ຂ້າພວກເຂົາ.
ອາແມນ.

# ພາກທີ 90

*ການເປີດເຜີຍໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຖືກມອບໃຫ້ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 8 ເດືອນມີນາ, 1833. ການເປີດເຜີຍນີ້ເປັນຄວາມກ້າວໜ້າເພີ່ມເຕີມໃນການສ້າງຕັ້ງຝ່າຍປະທານສູງສຸດ (ເບິ່ງ ຫົວຂໍ້ຂອງ ພາກທີ 81); ເພາະດ້ວຍການເປີດເຜີຍເທື່ອນີ້, ທີ່ປຶກສາທີ່ກ່າວເຖິງໄດ້ຖືກແຕ່ງຕັ້ງ ໃນວັນທີ 18 ເດືອນມີນາ, 1833.*

*1–5, ຂໍກະແຈຂອງອານາຈັກໄດ້ຖືກມອບໃຫ້ແກ່ໂຈເຊັບ ສະມິດ ແລະ ຜ່ານຈາກເພິ່ນມັນຖືກສົ່ງຕໍ່ໃຫ້ສາດສະໜາຈັກ; 6–7, ຊິດນີ ຣິກດອນ ແລະ ເຟຣ໌ເດຣິກ ຈີ ວິວລຽມສ໌ ຕ້ອງຮັບໃຊ້ຢູ່ໃນຝ່າຍປະທານສູງສຸດ; 8–11, ພຣະກິດຕິຄຸນຕ້ອງຖືກສັ່ງສອນແກ່ປະຊາຊາດຂອງອິດສະຣາເອນ, ແກ່ຄົນຕ່າງຊາດ, ແລະ ແກ່ຊາວຢິວ, ມະນຸດທຸກຄົນຈະໄດ້ຍິນໃນພາສາຂອງຕົນເອງ; 12–18, ໂຈເຊັບ ສະມິດ ແລະ ທີ່ປຶກສາຂອງເພິ່ນ ຕ້ອງຈັດສາດສະໜາຈັກໃຫ້ເປັນລະບຽບ; 19–37, ບຸກຄົນຕ່າງໆໄດ້ຮັບຄຳແນະນຳຈາກພຣະຜູ້ເປັນເຈົ້າໃຫ້ ເດີນໄປຢ່າງພາກພູມໃຈ ແລະ ຮັບໃຊ້ໃນອານາຈັກຂອງພຣະອົງ.*

1 ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ຕາມ
ຄວາມຈິງ, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບເຈົ້າບຸດຂອງເຮົາ, ບາບຂອງເຈົ້າໄດ້
ຖືກ [ກ]ອະໄພໃຫ້ແລ້ວ, ຕາມການອ້ອນວອນ
ຂອງເຈົ້າ, ເພາະຄຳອະທິຖານຂອງເຈົ້າ
ແລະ ຄຳອະທິຖານຂອງພີ່ນ້ອງຂອງເຈົ້າ
ໄດ້ຂຶ້ນມາເຖິງຫູຂອງເຮົາ.
2 ສະນັ້ນ, ເຈົ້າໄດ້ຮັບພອນແລ້ວນັບແຕ່
ນີ້ເປັນຕົ້ນໄປ ທີ່ໄດ້ຖື [ກ]ຂໍກະແຈຂອງອານາ
ຈັກຊຶ່ງໄດ້ມອບໃຫ້ແກ່ເຈົ້າ; ຊຶ່ງ [ຂ]ອານາຈັກ
ກຳລັງຈະອອກມາເປັນເທື່ອສຸດທ້າຍ.
3 ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າ
ວ່າ, ຂໍກະແຈແຫ່ງອານາຈັກຈະບໍ່ຖືກເອົາ
ໄປຈາກເຈົ້າ, ໃນຂະນະທີ່ເຈົ້າຢູ່ໃນໂລກ,
ທັງຢູ່ໃນໂລກທີ່ຈະມາເຖິງ;
4 ເຖິງຢ່າງໃດກໍຕາມ, ໂດຍຜ່ານເຈົ້າ
[ກ]ການເປີດເຜີຍຈະຖືກມອບໃຫ້ແກ່ຄົນອື່ນ,
ແທ້ຈິງແລ້ວ, ແມ່ນແຕ່ ໃຫ້ແກ່ສາດສະໜາ
ຈັກ.
5 ແລະ ທຸກຄົນເຫລົ່ານັ້ນທີ່ໄດ້ຮັບການ
ເປີດເຜີຍຈາກພຣະເຈົ້າ, ກໍໃຫ້ພວກເຂົາ
[ກ]ລະວັງກັບວິທີທີ່ພວກເຂົາ ນັບຖືມັນ ຖ້າ
ບໍ່ດັ່ງນັ້ນ ພວກເຂົາຈະນັບຖືມັນວ່າເປັນ
ເລື່ອງເລັກນ້ອຍ, ແລະ ຈະຖືກນຳມາຢູ່

21 *ກ* ຄພ 84:80.
*ຂ* ອພຍ 12:23, 29.
**90** 1 *ກ* ຄມພ ອະໄພ, ໃຫ້ອະໄພ.
2 *ກ* ຄພ 65:2.
ຄມພ ຂໍກະແຈຂອງ
ຖານະປະໂລຫິດ.
*ຂ* ຄມພ ອານາຈັກຂອງ
ພຣະເຈົ້າ ຫລື ອາ
ນາຈັກສະຫວັນ.
4 *ກ* ກຈກ 7:38;
ຣມ 3:2; ຣຣ 5:12;
ຄພ 124:39, 126.
ຄມພ ທຳນາຍ, ການ
ທຳນາຍ, ຄຳທຳນາຍ.
5 *ກ* ຄພ 1:14.

ພາຍ ໃຕ້ ການກ່າວ ໂທດ ເພາະການ ນັ້ນ, ແລະ ສະດຸດ ແລະ ລົ້ມເມື່ອລົມພະຍຸເກີດ ຂຶ້ນ, ແລະ ລົມພັດແຮງ, ແລະ [ຂ]ຝົນຖອກ ເທລົງ ມາ, ແລະ ກະ ໜ່ຳໃສ່ບ້ານ ເຮືອນ ຂອງພວກເຂົາ.

6 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວກັບພວກອ້າຍນ້ອງຂອງ ເຈົ້າ, ຊິດນີ ຣິກດອນ ແລະ ເຟຣ໌ເດຣິກ ຈີ ວິວລຽມສ໌, ວ່າບາບຂອງພວກເຂົາໄດ້ ຖືກອະໄພໃຫ້ແລ້ວຄືກັນ, ແລະ ພວກເຂົາ ຖືກນັບວ່າເທົ່າທຽມກັບເຈົ້າ ໃນການຖືຂໍ ກະແຈແຫ່ງອານາຈັກສຸດທ້າຍນີ້;

7 ດັ່ງທີ່ຜ່ານການປະຕິບັດງານຂອງເຈົ້າ
ຄືກັນກັ່ງວກັບຂໍກະແຈຂອງ [ກ]ໂຮງຮຽນຂອງ ສາດສະດາ, ຊຶ່ງເຮົາໄດ້ບັນຊາໃຫ້ຈັດຕັ້ງ ຂຶ້ນ;

8 ເພື່ອ ໂດຍ ການ ນີ້ ພວກ ເຂົາ ຈະ ຖືກ
ເຮັດ ໃຫ້ເປັນຄົນດີ ພ້ອມ ໃນ ການປະ ຕິ ບັດສາດສະໜາກິດຂອງພວກເຂົາສຳລັບ ຄວາມລອດຂອງຊີໂອນ, ແລະ ຂອງປະ ຊາຊາດຂອງອິດສະຣາເອນ, ແລະ ຂອງ ຄົນຕ່າງຊາດ, ເທົ່າທີ່ຫລາຍຕໍ່ຫລາຍຄົນທີ່ ຈະເຊື່ອ;

9 ເພື່ອວ່າໂດຍຜ່ານການປະຕິບັດງານ
ຂອງເຈົ້າ ພວກເຂົາຈະໄດ້ຮັບພຣະຄຳ, ແລະ ໂດຍຜ່ານການປະຕິບັດງານຂອງ ພວກເຂົາ ພຣະຄຳຈະໄດ້ອອກໄປເຖິງທີ່ ສຸດຂອງແຜ່ນດິນໂລກ, ໄປຫາ [ກ]ຄົນຕ່າງ ຊາດ [ຂ]ກ່ອນ, ແລະ ຈາກນັ້ນ, ຈົ່ງເບິ່ງ, ແລະ ເບິ່ງແມ, ພວກເຂົາຈະຫັນໄປຫາ ຊາວຢິວ.

10 ແລະ ຈາກນັ້ນ ວັນຈະມາເຖິງ ເມື່ອ
ແຂນຂອງພຣະຜູ້ເປັນເຈົ້າຈະ [ກ]ເປີດອອກ ໃນ ອຳນາດ ໃນການເຮັດໃຫ້ປະຊາຊາດ ຕ່າງໆ, ປະຊາຊາດນອກສາດສະໜາ, ເຊື້ອ ສາຍຂອງ [ຂ]ໂຢເຊັບ, ຮັບຮູ້ພຣະກິດຕິຄຸນ ແຫ່ງຄວາມລອດຂອງພວກເຂົາ.

11 ເພາະເຫດການຈະບັງເກີດຂຶ້ນໃນວັນ
ນັ້ນ, ວ່າທຸກຄົນຈະ [ກ]ໄດ້ຍິນຄວາມສົມບູນ ຂອງພຣະກິດຕິຄຸນໃນຄຳວາຈາຂອງເຂົາ ເອງ, ໃນພາສາຂອງເຂົາເອງ, ຜ່ານຜູ້ຄົນ ເຫລົ່ານັ້ນທີ່ໄດ້ຖືກ [ຂ]ແຕ່ງຕັ້ງສູ່ [ຄ]ອຳນາດນີ້, ໂດຍການປະຕິບັດງານຂອງ [ງ]ພຣະຜູ້ປອບ ໂຍນ, ຊຶ່ງໄດ້ຖືກສົ່ງໄປໃຫ້ພວກເຂົາເພື່ອ ການເປີດເຜີຍເລື່ອງພຣະເຢຊູຄຣິດ.

12 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບເຈົ້າວ່າ ເຮົາຈະມອບບັນຍັດຂໍ້ໜຶ່ງ ໃຫ້ແກ່ເຈົ້າ ວ່າໃຫ້ເຈົ້າສືບຕໍ່ໃນ [ກ]ການປະ ຕິບັດສາດສະໜາກິດ ແລະ ໃນການເປັນ ຝ່າຍປະທານ.

13 ແລະ ເມື່ອເຈົ້າໄດ້ສຳເລັດການ ແປ
ຖ້ອຍຄຳຂອງສາດສະດາແລ້ວ, ນັບແຕ່ນີ້ ເປັນຕົ້ນໄປໃຫ້ເຈົ້າ [ກ]ຄວບຄຸມກິດຈະການ ຂອງສາດສະໜາຈັກ ແລະ [ຂ]ໂຮງຮຽນ;

14 ແລະ ເປັນບາງຄັ້ງ, ດັ່ງທີ່ພຣະຜູ້ປອບ
ໂຍນຈະສະແດງໃຫ້ປະຈັກ, ພວກເຈົ້າຈະ ໄດ້ຮັບ [ກ]ການເປີດເຜີຍເຖິງ [ຂ]ຄວາມລຶກລັບ ຂອງອານາຈັກ;

---

5 *ຂ* ມທ 7:26–27.
7 *ກ* ຄມພ ໂຮງຮຽນຂອງ ສາດສະດາ.
9 *ກ* 1 ນຟ 13:42; ຄພ 107:33; 133:8.
*ຂ* ມທ 19:30; ອທ 13:10–12.
10 *ກ* ຄພ 43:23–27; 88:84, 87–92.
*ຂ* ປຖກ 49:22–26; 1 ນຟ 15:13–14.
11 *ກ* ຄມພ ວຽກງານເຜີຍແຜ່.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ; ເອີ້ນ, ການເອີ້ນ, ຖືກເອີ້ນ ຈາກພຣະເຈົ້າ, ຕຳແໜ່ງ.
*ຄ* ຄມພ ຖານະປະໂລຫິດ.
*ງ* ຄມພ ພຣະຜູ້ປອບໂຍນ.
12 *ກ* ຄມພ ປະຕິບັດ.
13 *ກ* ຄພ 107:91–92.
*ຂ* ຄມພ ໂຮງຮຽນຂອງ ສາດສະດາ.
14 *ກ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ຄມພ ຄວາມລຶກລັບ ຂອງພຣະເຈົ້າ.

15 ແລະ ໃຫ້ຈັດໜ່ວຍຂອງສາດສະໜາຈັກໃຫ້ເປັນລະບຽບ, ແລະ [ກ]ສຶກສາ ແລະ [ຂ]ຮຽນຮູ້, ແລະ ມາຄຸ້ນເຄີຍກັບປຶ້ມທີ່ດີທັງປວງ, ແລະ ກັບ [ຄ]ພາສາ, ຄຳເວົ້າ, ແລະ ຜູ້ຄົນ.

16 ແລະ ນີ້ຈະເປັນທຸລະກິດ ແລະ ພາລະກິດໃນຊີວິດທັງໝົດຂອງພວກເຈົ້າ, ເພື່ອຄວບຄຸມໃນສະພາ, ແລະ ຈັດຕັ້ງພາລະກິດທັງໝົດຂອງສາດສະໜາຈັກ ແລະ ອານາຈັກໃຫ້ເປັນລະບຽບ.

17 ຢ່າ [ກ]ລະອາຍໃຈ, ທັງຢ່າຍອມຈຳນົນ; ແຕ່ຈົ່ງຮັບການຕັກເຕືອນຕໍ່ຄວາມອວດດີ ແລະ [ຂ]ຄວາມທະນົງຕົວຂອງພວກເຈົ້າ, ເພາະມັນຈະນຳກັບດັກມາສູ່ຈິດວິນຍານຂອງພວກເຈົ້າ.

18 ຈົ່ງຈັດບ້ານເຮືອນຂອງພວກເຈົ້າໃຫ້ເປັນລະບຽບ; ໃຫ້ [ກ]ຄວາມກຽດຄ້ານ ແລະ [ຂ]ຄວາມບໍ່ສະອາດຢູ່ຫ່າງໄກຈາກພວກເຈົ້າ.

19 ບັດນີ້, ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ໃຫ້ຈັດຫາບ່ອນພັກພາອາໄສ, ໃຫ້ໄວເທົ່າທີ່ຈະເປັນໄປໄດ້, ສຳລັບຄອບຄົວຂອງທີ່ປຶກສາ ແລະ ຜູ້ຂຽນຂອງເຈົ້າ, ແມ່ນແຕ່ ເຟຣ໌ເດຣິກ ຈີ ວິວລຽມສ໌.

20 ແລະ ໃຫ້ຜູ້ຮັບໃຊ້ທີ່ອະວຸໂສຂອງເຮົາ, [ກ]ໂຈເຊັບ ສະມິດ, ຜູ້ພໍ່, ສືບຕໍ່ຢູ່ກັບຄອບຄົວຂອງລາວ ຢູ່ໃນບ່ອນທີ່ລາວອາໄສຢູ່ຕອນນີ້; ແລະ ບໍ່ໃຫ້ຂາຍມັນ ຈົນກວ່າຈະໄດ້ຍິນຈາກພຣະໂອດຂອງພຣະຜູ້ເປັນເຈົ້າ.

21 ແລະ ໃຫ້ທີ່ປຶກສາທີ່ເຮົາໄດ້ເລືອກ, ແມ່ນແຕ່ [ກ]ຊິດນີ ຣິກດອນ, ຢູ່ບ່ອນທີ່ລາວອາໄສຢູ່ໃນຕອນນີ້ ຈົນກວ່າຈະໄດ້ຍິນຈາກພຣະໂອດຂອງພຣະຜູ້ເປັນເຈົ້າ.

22 ແລະ ໃຫ້ອະທິການຊອກຫາຢ່າງພາກພຽນເພື່ອຈະໄດ້ມີ [ກ]ຕົວແທນ, ແລະ ໃຫ້ເຂົາເປັນຄົນທີ່ມີ [ຂ]ຄວາມຮັ່ງມີສະສົມໄວ້—ເປັນຄົນຂອງພຣະເຈົ້າ, ແລະ ມີສັດທາທີ່ເຂັ້ມແຂງ—

23 ເພື່ອວ່າໂດຍການນີ້ ລາວຈະສາມາດຈ່າຍໜີ້ສິນທັງໝົດ; ເພື່ອຄັງຂອງພຣະຜູ້ເປັນເຈົ້າຈະບໍ່ຖືກນຳໄປສູ່ການເສຍຊື່ສຽງຕໍ່ສາຍຕາຂອງຜູ້ຄົນ.

24 ຈົ່ງຄົ້ນຫາ [ກ]ຢ່າງພາກພຽນ, [ຂ]ອະທິຖານສະເໝີ, ແລະ ມີຄວາມເຊື່ອ, ແລະ [ຄ]ທຸກສິ່ງທັງປວງຈະທຳງານນຳກັນໄປເພື່ອຄວາມດີຂອງພວກເຈົ້າ, ຖ້າຫາກພວກເຈົ້າເດີນໄປຢ່າງພາກພູມໃຈ ແລະ ຈື່ຈຳພັນທະສັນຍາຊຶ່ງພວກເຈົ້າໄດ້ເຮັດ [ງ]ພັນທະສັນຍານຳກັນ.

25 ຈົ່ງໃຫ້ຄອບຄົວຂອງພວກເຈົ້າເປັນ [ກ]ຄອບຄົວນ້ອຍ, ໂດຍສະເພາະຂອງຜູ້ຮັບໃຊ້ຜູ້ອາວຸໂສຂອງເຮົາ ໂຈເຊັບ ສະມິດ, ຜູ້ພໍ່, ເມື່ອກ່ຽວກັບຄົນເຫລົ່ານັ້ນທີ່ບໍ່ໄດ້ເປັນສະມາຊິກຄອບຄົວຂອງພວກເຈົ້າ;

26 ເພື່ອສິ່ງເຫລົ່ານັ້ນທີ່ຖືກຈັດໄວ້ໃຫ້ພວກເຈົ້າ, ເພື່ອນຳວຽກງານຂອງເຮົາມາ, ຈະບໍ່ຖືກເອົາໄປຈາກພວກເຈົ້າ ແລະ ມອບໃຫ້ແກ່ຄົນທີ່ບໍ່ເໝາະສົມ—

15 *ກ* ຄພ 88:76–80, 118; 93:53.
*ຂ* ຄພ 107:99–100; 130:18–19.
*ຄ* ຄມພ ພາສາ.
17 *ກ* ຣມ 1:16; 2 ນຟ 6:13.
*ຂ* ຄພ 88:121. ຄມພ ຈອງຫອງ, ຄວາມຈອງຫອງ.
18 *ກ* ຄພ 58:26–29. ຄມພ ກຽດຄ້ານ, ຄວາມກຽດຄ້ານ.
*ຂ* ຄພ 38:42.
20 *ກ* ຄມພ ສະມິດ, ໂຈເຊັບ, ຜູ້ພໍ່.
21 *ກ* ຄມພ ຣິກດອນ, ຊິດນີ.
22 *ກ* ຄພ 84:112–113.
*ຂ* ຢຄ 2:17–19.
24 *ກ* ຄມພ ພາກພຽນ, ຄວາມພາກພຽນ.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຄ* ອຊຣ 8:22; ຣມ 8:28; ຄພ 100:15; 122:7–8.
*ງ* ຄມພ ພັນທະສັນຍາ.
25 *ກ* ອສ ຄົນທຸກທີ່ໂຈເຊັບ ສະມິດ ຜູ້ພໍ່ ດູແລ.

27 ແລະ ໂດຍການນີ້ ພວກເຈົ້າຈະຖືກຂັດຂວາງໃນການບັນລຸຄວາມສຳເລັດໃນສິ່ງທີ່ເຮົາໄດ້ບັນຊາພວກເຈົ້າ.

28 ແລະ ອີກ ເທື່ອ ໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມັນເປັນຄວາມປະສົງຂອງເຮົາ ທີ່ສາວໃຊ້ຂອງເຮົາ ນາງວີແອນນາ ແຈັກກີ ຄວນໄດ້ຮັບເງິນເພື່ອຈ່າຍຄ່າໃຊ້ຈ່າຍຂອງນາງ, ແລະ ຂຶ້ນໄປຍັງແຜ່ນດິນຊີໂອນ;

29 ແລະ ຈົ່ງອຸທິດຖວາຍເງິນທີ່ເຫລືອຢູ່ໃຫ້ແກ່ເຮົາ, ແລະ ນາງຈະໄດ້ຮັບລາງວັນໃນເວລາອັນເໝາະສົມຂອງເຮົາເອງ.

30 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມັນເປັນສິ່ງສົມຄວນໃນສາຍຕາຂອງເຮົາ ທີ່ນາງຈະຂຶ້ນໄປຍັງແຜ່ນດິນຊີໂອນ, ແລະ ຮັບເອົາມູນມໍລະດົກຈາກມືຂອງອະທິການ;

31 ເພື່ອວ່ານາງຈະໄດ້ຕັ້ງຖິ່ນຖານຢ່າງສັນຕິຕາບໃດທີ່ນາງຍັງຊື່ສັດ, ແລະ ບໍ່ກຽດຄ້ານໃນວັນເວລາຂອງນາງນັບແຕ່ນີ້ເປັນຕົ້ນໄປ.

32 ແລະ ຈົ່ງ ເບິ່ງ, ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ ພວກ ເຈົ້າ ຈະ ຕ້ອງຂຽນບັນຍັດຂໍ້ນີ້ໄວ້, ແລະ ກ່າວກັບພີ່ນ້ອງຂອງພວກເຈົ້າຢູ່ໃນຊີໂອນ, ໃນການສົ່ງຄວາມຮັກ, ວ່າເຮົາໄດ້ເອີ້ນພວກເຈົ້າໃຫ້ເປັນຜູ້ [ກ]ຄວບຄຸມຊີໂອນໃນວັນເວລາອັນເໝາະສົມຂອງເຮົາເອງ.

33 ສະນັ້ນ, ໃຫ້ພວກເຂົາເຊົາລົບກວນເຮົາກ່ຽວກັບເລື່ອງນີ້.

34 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ ພີ່ນ້ອງຂອງພວກເຈົ້າໃນຊີໂອນເລີ່ມຕົ້ນກັບໃຈແລ້ວ, ແລະ ເຫລົ່າທູດກໍປິຕິຍິນດີນຳພວກເຂົາ.

35 ເຖິງຢ່າງໃດກໍຕາມ, ເຮົາຍັງບໍ່ພໍໃຈໃນຫລາຍເລື່ອງ; ແລະ ເຮົາກໍບໍ່ພໍໃຈກັບຜູ້ຮັບໃຊ້ຂອງເຮົາ [ກ]ວິວລຽມ ອີ ມິກລີລິນ, ທັງບໍ່ພໍໃຈກັບຜູ້ຮັບໃຊ້ຂອງເຮົາ ຊິດນີ ກຽວເບີດ; ແລະ ອະທິການນຳອີກ, ແລະ ຄົນອື່ນໆ ຊຶ່ງມີຫລາຍສິ່ງທີ່ຕ້ອງກັບໃຈ.

36 ແຕ່ ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ, ເຮົາ, ພຣະຜູ້ເປັນເຈົ້າ, ຈະຕໍ່ສູ້ກັບ [ກ]ຊີໂອນ, ແລະ ຈະວິງວອນກັບຄົນທີ່ແຂງແຮງຂອງມັນ, ແລະ [ຂ]ຕີສອນມັນຈົນກວ່າມັນຈະຊະນະ ແລະ [ຄ]ສະອາດຢູ່ຕໍ່ໜ້າເຮົາ.

37 ເພາະ ມັນ ຈະ ບໍ່ ຖືກ ຍ້າຍ ອອກ ຈາກບ່ອນຂອງມັນ. ເຮົາພຣະຜູ້ເປັນເຈົ້າ ກ່າວມັນໄວ້ດັ່ງນີ້. ອາແມນ.

# ພາກທີ 91

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 9 ເດືອນມີນາ, 1833. ໃນຊ່ວງເວລານັ້ນສາດສະດາໄດ້ໃຊ້ເວລາເຮັດວຽກງານການແປພຣະຄຳພີເດີມ. ເມື່ອມາເຖິງພາກສ່ວນການຂຽນຂອງສະໄໝບູຮານທີ່ເອີ້ນວ່າອາພໍກະຣາຟາ, ເພິ່ນໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບຄຳແນະນຳນີ້.*

32 *ກ* ຄພ 107:91–92.
35 *ກ* ຄພ 66:1; 75:6–9.
36 *ກ* ຄມພ ຊີໂອນ.
*ຂ* ຄມພ ຕີສອນ, ການຕີສອນ.
*ຄ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.

*1–3, ສ່ວນຫລາຍແລ້ວ ອາພໍກະຣາຟາ ໄດ້ຖືກແປໄວ້ຢ່າງຖືກຕ້ອງ, ແຕ່ມີຫລາຍຄຳທີ່ຖືກແປໂດຍມືຂອງມະນຸດທີ່ບໍ່ຖືກຕ້ອງ; 4–6, ມັນເປັນປະໂຫຍດແກ່ຄົນທີ່ໄດ້ຮັບຄວາມສະຫວ່າງໂດຍພຣະວິນຍານ.*

1 ຕາມຄວາມຈິງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບເຈົ້າກ່ຽວກັບ [ກ]ອາພໍກະຣາຟາ—ມີຫລາຍສິ່ງທີ່ບັນຈຸຢູ່ໃນນັ້ນເປັນຄວາມຈິງ, ແລະ ສ່ວນຫລາຍແລ້ວມັນກໍຖືກແປຢ່າງຖືກຕ້ອງ;

2 ມີຫລາຍສິ່ງທີ່ບັນຈຸຢູ່ໃນນັ້ນທີ່ບໍ່ເປັນຄວາມຈິງ, ຊຶ່ງຖືກແປໂດຍມືຂອງມະນຸດ.

3 ຕາມຄວາມຈິງແລ້ວ, ເຮົາກ່າວກັບເຈົ້າວ່າ ມັນບໍ່ຈຳເປັນທີ່ຈະແປ ອາພໍກະຣາຟາ.

4 ສະນັ້ນ, ຜູ້ໃດກໍ ຕາມທີ່ ອ່ານ ມັນ, ກໍໃຫ້ເຂົາ [ກ]ເຂົ້າໃຈ, ເພາະພຣະວິນຍານໄດ້ສະແດງຄວາມຈິງໃຫ້ປະຈັກ;

5 ແລະ ຜູ້ໃດ ທີ່ໄດ້ຮັບຄວາມສະຫວ່າງໂດຍ [ກ]ພຣະວິນຍານ ຈະໄດ້ຮັບຜົນປະໂຫຍດຈາກມັນ;

6 ແລະ ຜູ້ໃດທີ່ບໍ່ໄດ້ຮັບມັນໂດຍພຣະວິນຍານ, ຈະບໍ່ໄດ້ຮັບຜົນປະໂຫຍດ. ສະນັ້ນຈຶ່ງບໍ່ຈຳເປັນທີ່ຈະແປມັນ. ອາແມນ.

## ພາກທີ 92

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 15 ເດືອນມີນາ, 1833. ການເປີດເຜີຍແນະນຳ ເຟຣ໌ເດຣິກ ຈີ ວິລລຽມສ໌, ຜູ້ຫາກໍໄດ້ຖືກແຕ່ງຕັ້ງໃຫ້ເປັນທີ່ປຶກສາຂອງໂຈເຊັບ ສະມິດ, ໃນໜ້າທີ່ຂອງເພິ່ນ ໃນ ກຸ່ມທຸລະກິດເອກະພາບ (ເບິ່ງ ຫົວຂໍ້ຂອງ ພາກທີ 78 ແລະ 82).*

*1–2, ພຣະຜູ້ເປັນເຈົ້າປະທານພຣະບັນຍັດຂໍ້ໜຶ່ງທີ່ກ່ຽວພັນກັບການເຂົ້າຮ່ວມລະບົບເອກະພາບ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຮົາໄດ້ [ກ]ມອບລະບົບເອກະພາບ, ທີ່ໄດ້ຈັດຕັ້ງໄວ້ໃຫ້ສອດຄ່ອງກັບບັນຍັດທີ່ໄດ້ມອບໃຫ້ຜ່ານມາແລ້ວ, ເປັນການເປີດເຜີຍ ແລະ ບັນຍັດກ່ຽວກັບຜູ້ຮັບໃຊ້ຂອງເຮົາ ເຟຣ໌ເດຣິກ ຈີ ວິລລຽມສ໌, ວ່າເຈົ້າຈະຮັບເອົາລາວເຂົ້າໃນລະບຽບ. ສິ່ງໃດກໍຕາມທີ່ເຮົາກ່າວກັບຄົນໜຶ່ງ ກໍຄືກັນກັບເຮົາກ່າວກັບທຸກຄົນ.

2 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບເຈົ້າ ຜູ້ຮັບໃຊ້ຂອງເຮົາ ເຟຣ໌ເດຣິກ ຈີ ວິລລຽມສ໌, ເຈົ້າຈະເປັນສະມາຊິກທີ່ເຂັ້ມແຂງໃນລະບົບນີ້; ແລະ ຕາບໃດທີ່ເຈົ້າຍັງຊື່ສັດໃນການຮັກສາບັນຍັດກ່ອນໆທັງໝົດ, ເຈົ້າຈະໄດ້ຮັບພອນຕະຫລອດການ. ອາແມນ.

**91** 1*ກ* ຄມພ ອາພໍກະຣາຟາ.
4*ກ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.
5*ກ* ຄມພ ດົນໃຈ, ການດົນໃຈ; ພຣະວິນຍານບໍລິສຸດ.
**92** 1*ກ* ຄພ 82:11, 15–21. ຄມພ ລະບົບເອກະພາບ.

# ພາກທີ 93

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 6 ເດືອນພຶດສະພາ, 1833.*

*1–5, ທຸກຄົນທີ່ຊື່ສັດຈະເຫັນພຣະຜູ້ເປັນເຈົ້າ; 6–18, ໂຢຮັນ ໄດ້ເປັນພະຍານ ວ່າພຣະບຸດຂອງພຣະເຈົ້າ ໄດ້ດຳເນີນໄປຈາກພຣະຄຸນໜຶ່ງຫາອີກພຣະຄຸນໜຶ່ງ ຈົນກວ່າພຣະອົງໄດ້ຮັບຄວາມສົມບູນແຫ່ງລັດສະໝີພາບ ຂອງພຣະບິດາ; 19–20, ຄົນທີ່ຊື່ສັດ, ໂດຍທີ່ດຳເນີນໄປຈາກພຣະຄຸນໜຶ່ງຫາອີກພຣະຄຸນໜຶ່ງ, ຈະໄດ້ຮັບຄວາມສົມບູນຂອງພຣະອົງຄືກັນ; 21–22, ຜູ້ຄົນເຫລົ່ານັ້ນທີ່ຖືກກຳເນີດຜ່ານພຣະຄຣິດເປັນສາດສະໜາຈັກຂອງພຣະບຸດຫົວປີ; 23–28, ພຣະຄຣິດໄດ້ຮັບຄວາມສົມບູນຂອງຄວາມຈິງທຸກຢ່າງ, ແລະ ໂດຍການເຊື່ອຟັງມະນຸດຈະໄດ້ຮັບເຊັ່ນດຽວກັນ; 29–32, ໃນຕອນຕົ້ນມະນຸດໄດ້ຢູ່ນຳພຣະເຈົ້າ; 33–35, ທາດຕ່າງໆເປັນນິລັນດອນ, ແລະ ມະນຸດຈະໄດ້ຮັບຄວາມສົມບູນແຫ່ງຄວາມຊື່ນຊົມໃນການຟື້ນຄືນຊີວິດ; 36–37, ລັດສະໝີພາບຂອງພຣະເຈົ້າຄືຄວາມຮູ້ແຈ້ງ; 38–40, ເດັກນ້ອຍໆບໍລິສຸດຢູ່ຕໍ່ພຣະພັກຂອງພຣະເຈົ້າ ເພາະການໄຖ່ຂອງພຣະຄຣິດ; 41–53, ພວກອ້າຍນ້ອງຜູ້ນຳຖືກບັນຊາໃຫ້ຈັດຄອບຄົວຂອງເຂົາເຈົ້າໃຫ້ເປັນລະບຽບ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ເຫດການຈະບັງເກີດຂຶ້ນຄືທຸກຄົນທີ່ໄດ້ [ກ]ປະຖິ້ມບາບຂອງຕົນ ແລະ ມາຫາເຮົາ, ແລະ [ຂ]ເອີ້ນຫານາມຂອງເຮົາ, ແລະ [ຄ]ເຊື່ອຟັງສຽງຂອງເຮົາ, ແລະ ຮັກສາບັນຍັດຂອງເຮົາ, ຈະ [ງ]ເຫັນ [ຈ]ໜ້າຂອງເຮົາ ແລະ ຮູ້ວ່າເຮົາເປັນຢູ່;

2 ແລະ ວ່າເຮົາຄື [ກ]ຄວາມສະຫວ່າງທີ່ແທ້ຈິງ ທີ່ໃຫ້ຄວາມສະຫວ່າງແກ່ມະນຸດທຸກຄົນທີ່ມາສູ່ໂລກ;

3 ແລະ ວ່າເຮົາຢູ່ [ກ]ໃນພຣະບິດາ, ແລະ ພຣະບິດາຢູ່ໃນເຮົາ, ແລະ ພຣະບິດາກັບເຮົາເປັນໜຶ່ງ—

4 ພຣະ ບິດາ [ກ]ເພາະ ພຣະ ອົງ ໄດ້ [ຂ]ປະທານຄວາມສົມບູນທັງໝົດຂອງພຣະອົງໃຫ້ແກ່ເຮົາ, ແລະ ພຣະບຸດ ເພາະເຮົາໄດ້ຢູ່ໃນໂລກມາແລ້ວ ແລະ ໄດ້ໃຫ້ [ຄ]ເນື້ອໜັງເປັນຮ່າງກາຍຂອງເຮົາ, ແລະ ໄດ້ອາໄສຢູ່ໃນບັນດາມະນຸດ.

5 ເຮົາໄດ້ຢູ່ໃນໂລກ ແລະ ໄດ້ຮັບຈາກພຣະບິດາຂອງເຮົາ, ແລະ [ກ]ວຽກງານຂອງພຣະອົງໄດ້ຖືກສະແດງໃຫ້ປະຈັກຢ່າງແຈ່ມແຈ້ງ.

---

**93** 1 *ກ* ຄມພ ກັບໃຈ, ການກັບໃຈ; ຄ່າຄວນ, ການມີຄ່າຄວນ.
*ຂ* ຢອ 2:32.
*ຄ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
*ງ* ອພຍ 33:11; ຄພ 38:7–8; 67:10–12; 88:68; 101:23; 130:3. ຄມພ ພຣະຜູ້ປອບໂຍນ.
*ຈ* ປຈສ 1 ຢຮ 4:12 (ພາກທ້ອຍທ້າຍ).
2 *ກ* ຢຮ 1:4–9; ຄພ 14:9; 84:45–47; 88:6–7. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
3 *ກ* ຢຮ 10:25–38; 17:20–23; ຄພ 50:43–45.
4 *ກ* ມຊຢ 15:1–7.
*ຂ* ຄມພ ພຣະເຢຊູຄຣິດ—ສິດອຳນາດ.
*ຄ* ລກ 1:26–35; 2:4–14; 3 ນຟ 1:12–14; ອທ 3:14–16.
5 *ກ* ຢຮ 5:36; 10:25; 14:10–12.

6 ແລະ [ກ]ໂຢຮັນ ໄດ້ ເຫັນ ແລະ ເປັນ
ພະຍານ ເຖິງຄວາມສົມບູນ ແຫ່ງ [ຂ]ລັດສະ
ໝີພາບຂອງເຮົາ, ແລະ ຄວາມສົມບູນຂອງ
ບັນ ທຶກ [ຄ]ຂອງ ໂຢຮັນຈະຖືກເປີດ ເຜີຍຕໍ່
ຈາກນີ້ໄປ.
7 ແລະ ລາວໄດ້ເປັນພະຍານ, ໂດຍກ່າວ
ວ່າ: ເຮົາໄດ້ເຫັນລັດສະໝີພາບຂອງພຣະ
ອົງ, ວ່າພຣະອົງຢູ່ໃນ [ກ]ການເລີ່ມຕົ້ນ, ກ່ອນ
ໂລກມີມາ;
8 ສະນັ້ນ, ເມື່ອ ຕົ້ນ ເດີມ ນັ້ນ [ກ]ພຣະ ທຳ
ເປັນຢູ່ແລ້ວ, ເພາະພຣະອົງເປັນພຣະທຳ,
ແມ່ນແຕ່ເປັນທູດແຫ່ງຄວາມລອດ—
9 ເປັນ [ກ]ຄວາມສະຫວ່າງ ແລະ [ຂ]ພຣະ
ຜູ້ໄຖ່ຂອງໂລກ; ເປັນພຣະວິນຍານແຫ່ງ
ຄວາມຈິງ, ຜູ້ໄດ້ສະເດັດມາສູ່ໂລກ, ເພາະ
ໂລກໄດ້ຖືກສ້າງຂຶ້ນ ໂດຍພຣະອົງ, ແລະ
ໃນພຣະອົງ ຊີວິດມະນຸດ ແລະ ຄວາມສະ
ຫວ່າງຂອງມະນຸດຈຶ່ງເປັນມາ.
10 ໂລກຕ່າງໆ ໄດ້ຖືກ [ກ]ສ້າງຂຶ້ນໂດຍ
ພຣະອົງ; ມະນຸດໄດ້ຖືກສ້າງຂຶ້ນໂດຍພຣະ
ອົງ; ທຸກສິ່ງທັງປວງໄດ້ຖືກສ້າງຂຶ້ນໂດຍ
ພຣະອົງ, ແລະ ຜ່ານພຣະອົງ, ແລະ ຈາກ
ພຣະອົງ.
11 ແລະ ຂ້າ ພະ ເຈົ້າ, ໂຢຮັນ, ເປັນ
ພະຍານວ່າ ຂ້າພະເຈົ້າໄດ້ເຫັນລັດສະໝີ
ພາບຂອງພຣະອົງ, ດັ່ງລັດສະໝີພາບຂອງ
ພຣະອົງດຽວທີ່ຖືກຳເນີດຈາກພຣະບິດາ,
ເຕັມໄປດ້ວຍພຣະຄຸນ ແລະ ຄວາມຈິງ,
ແມ່ນແຕ່ພຣະວິນຍານແຫ່ງຄວາມຈິງ, ຊຶ່ງ
ໄດ້ສະເດັດມາ ແລະ ໄດ້ອາໄສຢູ່ໃນເນື້ອ
ໜັງ, ແລະ ໄດ້ອາໄສ ຢູ່ໃນບັນດາພວກ
ເຮົາ.
12 ແລະ ຂ້າພະເຈົ້າ, ໂຢຮັນ, ໄດ້ເຫັນວ່າ
ພຣະອົງບໍ່ໄດ້ຮັບ [ກ]ຄວາມສົມບູນໃນຕອນ
ທຳອິດ, ແຕ່ໄດ້ຮັບ [ຂ]ພຣະຄຸນ ແທນພຣະ
ຄຸນ;
13 ແລະ ພຣະອົງບໍ່ໄດ້ຮັບຄວາມສົມບູນ
ໃນຕອນທຳອິດ, ແຕ່ໄດ້ຮັບຈາກ [ກ]ພຣະຄຸນ
ໜຶ່ງຫາອີກພຣະຄຸນໜຶ່ງ, ຈົນກວ່າພຣະອົງ
ໄດ້ຮັບຄວາມສົມບູນ;
14 ແລະ ດັ່ງນັ້ນພຣະອົງຈຶ່ງຖືກເອີ້ນວ່າ
[ກ]ພຣະບຸດຂອງພຣະເຈົ້າ, ເພາະພຣະອົງບໍ່
ໄດ້ຮັບຄວາມສົມບູນໃນຕອນທຳອິດ.
15 ແລະ ຂ້າພະເຈົ້າ, [ກ]ໂຢຮັນ, ເປັນ
ພະຍານ, ແລະ ເບິ່ງແມ, ຟ້າສະຫວັນໄດ້
ເປີດອອກ, ແລະ [ຂ]ພຣະວິນຍານບໍລິສຸດໄດ້
ສະເດັດລົງມາເທິງພຣະອົງເປັນ [ຄ]ຮູບນົກ
ເຂົາ, ແລະ ຈັບຢູ່ເທິງພຣະອົງ, ແລະ ສຽງ
ຈາກຟ້າສະຫວັນໄດ້ກ່າວວ່າ: ນີ້ຄື [ງ]ບຸດທີ່
ຮັກຂອງເຮົາ.
16 ແລະ ຂ້າ ພະ ເຈົ້າ, ໂຢຮັນ, ເປັນ
ພະຍານວ່າ ພຣະອົງໄດ້ຮັບຄວາມສົມບູນ
ແຫ່ງລັດສະໝີພາບ ຂອງພຣະບິດາ;
17 ແລະ ພຣະອົງໄດ້ຮັບ [ກ]ອຳນາດ [ຂ]ທັງ

---

6 *ກ* ຢຮ 1:34.
*ຂ* ຄມພ ພຣະເຢຊູຄຣິດ—ລັດສະໝີພາບຂອງພຣະເຢຊູຄຣິດ.
*ຄ* ຢຮ 20:30–31.
7 *ກ* ຢຮ 1:1–3, 14; 17:5; ຄພ 76:39.
8 *ກ* ຄມພ ພຣະເຢຊູຄຣິດ; ເຢໂຮວາ.
9 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ຄມພ ພຣະຜູ້ໄຖ່.
10 *ກ* ຮຮ 1:1–3; ຄພ 76:24; ມຊ 1:31–33.
12 *ກ* ຟລປ 2:6–11.
*ຂ* ຢຮ 1:16–17.
13 *ກ* ລກ 2:52.
14 *ກ* ລກ 1:31–35; ຄພ 6:21.
ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບຸດ.
15 *ກ* ຢຮ 1:29–34.
*ຂ* ຄມພ ພຣະວິນຍານບໍລິສຸດ.
*ຄ* ຄມພ ນົກເຂົາ, ເຄື່ອງໝາຍຂອງ.
*ງ* ມທ 3:16–17.
17 *ກ* ຄມພ ພຣະເຢຊູຄຣິດ—ສິດອຳນາດ; ອຳນາດ.
*ຂ* ມທ 28:18; ຢຮ 17:2; 1 ປຕ 3:22.

ໝົດ, ທັງ ໃນ ສະຫວັນ ແລະ ເທິງ ແຜ່ນ ດິນ
ໂລກ, ແລະ ລັດ ສະ ໝີ ພາບ ຂອງ [ຄ]ພຣະ
ບິດາໄດ້ຢູ່ກັບພຣະອົງ, ເພາະພຣະອົງໄດ້
ສະຖິດຢູ່ໃນພຣະອົງ.
18 ແລະ ເຫດການຈະບັງເກີດຂຶ້ນ, ຄືຖ້າ
ຫາກພວກເຈົ້າຊື່ສັດ, ພວກເຈົ້າຈະໄດ້ຮັບ
ຄວາມສົມບູນຂອງບັນທຶກຂອງໂຢຮັນ.
19 ເຮົາ ມອບ ຄຳກ່າວ ເຫລົ່ານີ້ແກ່ພວກ
ເຈົ້າ ເພື່ອພວກເຈົ້າຈະເຂົ້າໃຈ ແລະ ຮູ້ວ່າ
ຈະ [ກ]ນະມັດສະການຢ່າງໃດ, ແລະ ຮູ້ວ່າ
ພວກເຈົ້ານະມັດສະການສິ່ງໃດ, ເພື່ອພວກ
ເຈົ້າຈະມາຫາພຣະບິດາໃນນາມຂອງເຮົາ,
ແລະ ຮັບເອົາຄວາມສົມບູນຂອງພຣະອົງ
ໃນເວລາອັນເໝາະສົມ.
20 ເພາະຖ້າຫາກພວກເຈົ້າຮັກສາ [ກ]ບັນ
ຍັດ ຂອງ ເຮົາ, ແລ້ວ ພວກ ເຈົ້າ ຈະ ໄດ້ຮັບ
[ຂ]ຄວາມ ສົມ ບູນ ຂອງພຣະອົງ, ແລະ ໄດ້
ຮັບ [ຄ]ກຽດຕິຍົດໃນເຮົາ ດັ່ງທີ່ເຮົາໄດ້ຮັບໃນ
ພຣະບິດາ; ສະນັ້ນ, ເຮົາກ່າວກັບພວກເຈົ້າ
ວ່າ ພວກເຈົ້າຈະໄດ້ຮັບ [ງ]ພຣະຄຸນແທນ
ພຣະຄຸນ.
21 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ເຮົາໄດ້ຢູ່ໃນ [ກ]ການ
ເລີ່ມ ຕົ້ນກັບພຣະບິດາ, ແລະ ເຮົາເປັນ
[ຂ]ພຣະບຸດຫົວປີ;
22 ແລະ ທຸກຄົນ ເຫລົ່ານັ້ນທີ່ຖືກຳເນີດ
ຜ່ານເຮົາ ຈະໄດ້ [ກ]ຮັບ [ຂ]ລັດສະໝີພາບອັນ
ດຽວກັນນັ້ນ, ແລະ ເປັນສາດສະໜາຈັກ
ຂອງພຣະບຸດຫົວປີ.
23 ໃນ ຕອນ ຕົ້ນ ພວກ ເຈົ້າ ໄດ້ [ກ]ຢູ່ ກັບ
ພຣະ ບິດາ ຄື ກັນ; ຊຶ່ງເປັນ ພຣະ ວິນຍານ,
ແມ່ນແຕ່ເປັນພຣະວິນຍານແຫ່ງຄວາມຈິງ;
24 ແລະ [ກ]ຄວາມຈິງຄື [ຂ]ຄວາມຮູ້ເຖິງສິ່ງ
ທີ່ເປັນຢູ່, ແລະ ດັ່ງທີ່ໄດ້ເປັນມາ, ແລະ ດັ່ງ
ທີ່ຈະເປັນ;
25 ແລະ ສິ່ງ ໃດ ກໍ ຕາມ ທີ່ [ກ]ຫລາຍ
ຫລື ໜ້ອຍກວ່ານີ້ ເປັນວິນຍານ ຂອງຄົນ
ຊົ່ວຜູ້ ນັ້ນ ຊຶ່ງເປັນ [ຂ]ຜູ້ເວົ້າຕົວະນັບຕັ້ງ
ແຕ່ຕົ້ນ.
26 ພຣະວິນຍານແຫ່ງ [ກ]ຄວາມຈິງແມ່ນ
ມາ ຈາກ ພຣະເຈົ້າ. ເຮົາຄືພຣະວິນຍານ
ແຫ່ງ ຄວາມ ຈິງ, ແລະ ໂຢຮັນ ໄດ້ເປັນ
ພະຍານເຖິງເຮົາ, ໂດຍກ່າວວ່າ: ລາວໄດ້
ຮັບຄວາມສົມບູນແຫ່ງຄວາມຈິງ, ແທ້ຈິງ
ແລ້ວ, ແມ່ນແຕ່ແຫ່ງຄວາມຈິງທັງໝົດ;
27 ແລະ ບໍ່ ມີ ມະນຸດຄົນ ໃດຈະໄດ້ຮັບ
[ກ]ຄວາມສົມບູນ ຍົກເວັ້ນແຕ່ເຂົາໄດ້ຮັກສາ
ບັນຍັດຂອງພຣະອົງ.
28 ຄົນ ທີ່ [ກ]ຮັກສາບັນຍັດຂອງພຣະອົງ
ຈະ ໄດ້ ຮັບ ຄວາມ ຈິງ ແລະ [ຂ]ຄວາມສະ
ຫວ່າງ, ຈົນກວ່າເຂົາຈະໄດ້ຮັບກຽດຕິຍົດ
ໃນຄວາມຈິງ ແລະ [ຄ]ຮູ້ທຸກສິ່ງທັງປວງ.

---

17 ຄ ຄມພ ພຣະເຈົ້າ, ຝ່າຍ ພຣະເຈົ້າ—ພຣະເຈົ້າ ອົງເປັນພຣະບິດາ.
19 ກ ຢຮ 4:21–26; 17:3; ກຈກ 17:22–25. ຄມພ ນະມັດສະການ.
20 ກ ຄພ 50:28.
ຂ ຢຮ 1:16; ຄພ 84:36–39.
ຄ ຢຮ 17:4–5, 22. ຄມພ ມະນຸດ—ມະນຸດ, ສັກກະຍະພາບທີ່ຈະ ກາຍເປັນເໝືອນດັ່ງພຣະ ບິດາເທິງສະຫວັນ.
ງ ຄມພ ພຣະຄຸນ.
21 ກ ຢຮ 1:1–2; 1 ປຕ 1:19–20; ມຊ 4:2.
ຂ ຄມພ ລູກກົກ.
22 ກ 1 ປຕ 5:1; ຄພ 133:57.
ຂ ຄມພ ລັດສະໝີພາບ ຂອງຊັ້ນສູງ.
23 ກ ຄມພ ມະນຸດ—ມະນຸດ, ລູກທາງວິນຍານຂອງ ພຣະບິດາເທິງສະຫວັນ.
24 ກ ຄມພ ຈິງ, ຄວາມຈິງ.
ຂ ຄມພ ຄວາມຮູ້.
25 ກ ຄພ 20:35.
ຂ ຢຮ 8:44; 2 ນຟ 2:18; ມຊ 4:4.
26 ກ ຢຮ 14:6.
27 ກ ຄມພ ດີພ້ອມທຸກຢ່າງ.
28 ກ ຄມພ ເຊື່ອຟັງ, ການ ເຊື່ອຟັງ, ຟັງຄວາມ.
ຂ ຄພ 50:24; 84:45. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງ ຂອງພຣະຄຣິດ.
ຄ ຢຮ 17:3; ຄພ 88:49, 67.

29 ມະນຸດກໍໄດ້ຢູ່ກັບພຣະເຈົ້າໃນ ᵍຕອນ
ຕົ້ນຄືກັນ. ᵉຄວາມຮູ້ແຈ້ງ, ຫລື ຄວາມສະ
ຫວ່າງ ແຫ່ງຄວາມຈິງ, ບໍ່ ໄດ້ ຖືກ ສ້າງ ຫລື
ເຮັດຂຶ້ນ, ທັງແນ່ນອນວ່າບໍ່ສາມາດເຮັດ
ໄດ້.

30 ຄວາມ ຈິງ ທັງ ໝົດ ເປັນ ອິດສະ ລະ ຢູ່
ໃນ ຂອບ ເຂດ ທີ່ ພຣະ ເຈົ້າ ໄດ້ ວາງ ມັນ ໄວ້,
ເພື່ອ ᵍກະ ທຳ ດ້ວຍ ຕົວ ຂອງ ມັນ ເອງ, ດັ່ງ
ຄວາມຮູ້ແຈ້ງທັງໝົດ; ຖ້າບໍ່ດັ່ງນັ້ນກໍບໍ່ມີ
ການເປັນຢູ່.

31 ຈົ່ງເບິ່ງ, ນີ້ຄື ᵍອຳເພີໃຈຂອງມະນຸດ,
ແລະ ນີ້ ຄື ກາ ນ ກ່າວ ໂທດ ຂອງ ມ ະນຸດ;
ເພາະ ວ່າ ສິ່ງທີ່ມາຈາກຕັ້ງແຕ່ຕົ້ນໄດ້ຖືກ
ᵉສະແດງໃຫ້ປະຈັກຢ່າງແຈ່ມແຈ້ງແລ້ວແກ່
ພວກເຂົາ, ແລະ ພວກເຂົາບໍ່ໄດ້ຮັບເອົາ
ຄວາມສະຫວ່າງ.

32 ແລະ ທຸກຄົນທີ່ວິນຍານຂອງເຂົາບໍ່
ຮັບເອົາ ᵍຄວາມສະຫວ່າງແມ່ນຢູ່ພາຍໃຕ້
ການກ່າວໂທດ.

33 ເພາະ ມະນຸດ ເປັນ ᵍວິນ ຍານ. ᵉທາດ
ຕ່າງໆເປັນນິລັນດອນ, ແລະ ວິນຍານກັບ
ທາດ, ສຳພັນກັນຢ່າງແຍກບໍ່ໄດ້, ຈະໄດ້
ຮັບຄວາມສົມບູນແຫ່ງຄວາມຊື່ນຊົມ;

34 ແ ລະ ເ ມື່ອ ᵍແຍກ ອອກ ຈາກ ກັນ,
ມະນຸດບໍ່ສາມາດໄດ້ຮັບຄວາມສົມບູນແຫ່ງ
ᵉຄວາມຊື່ນຊົມ.

35 ᵍທາດ ຕ່າງໆ ເປັນ ທີ່ ພັກ ຂອງ ພຣະ
ເຈົ້າ; ແທ້ຈິງແລ້ວ, ມະນຸດເປັນທີ່ພັກຂອງ
ພຣະ ເຈົ້າ, ແມ່ນແຕ່ເປັນ ᵉພຣະວິຫານ;
ແລະ ພຣະວິຫານໃດກໍຕາມທີ່ເສື່ອມຄວາມ
ສັກສິດ, ພຣະເຈົ້າຈະທຳລາຍພຣະວິຫານ
ນັ້ນ.

36 ᵍລັດສະໝີພາບຂອງພຣະເຈົ້າເປັນ
ᵉຄວາມ ຮູ້ ແຈ້ງ, ຫລື, ອີກ ຄຳ ໜຶ່ງ, ເປັນ
ᶜຄວາມສະຫວ່າງ ແລະ ຄວາມຈິງ.

37 ຄວາມສະຫວ່າງ ແລະ ຄວາມຈິງ ຈະ
ປະຖິ້ມ ᵍມານຮ້າຍຜູ້ນັ້ນ.

38 ວິນຍານຂອງມະນຸດແຕ່ລະຄົນ ᵍບໍລິ
ສຸດໃນຕອນຕົ້ນ; ແລະ ໂດຍທີ່ພຣະເຈົ້າໄດ້
ᵉໄຖ່ມະນຸດຈາກ ᶜການຕົກ, ມະນຸດຈຶ່ງກາຍ
ເປັນຄົນ ᵓບໍລິສຸດຄືນອີກ, ຢູ່ໃນສະພາບ
ເດັກແດງທາລົກຂອງພວກເຂົາ, ຕໍ່ພຣະພັກ
ຂອງພຣະເຈົ້າ.

39 ແລະ ວ່າຄົນຊົ່ວຄົນນັ້ນໄດ້ມາ ແລະ
ᵍເອົາ ຄວາມສະຫວ່າງ ແລະ ຄວາມຈິງ
ໄປ, ຜ່ານການບໍ່ເຊື່ອຟັງ, ຈາກລູກຫລານ

29 *ກ* ອຣຣ 3:18. ຄມພ ຊີວິດກ່ອນເກີດ; ມະນຸດ.
*ຂ* ຄມພ ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ.
30 *ກ* 2 ນຟ 2:13–27.
31 *ກ* ຄມພ ອຳເພີໃຈ.
*ຂ* ພບຍ 30:11–14; ຄພ 84:23–24.
32 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ຈິງ, ຄວາມຈິງ.
33 *ກ* ຄພ 77:2; ອຣຣ 5:7–8. ຄມພ ມະນຸດ—ມະນຸດ, ລູກທາງວິນຍານຂອງພຣະບິດາເທິງສະຫວັນ.
*ຂ* ຄພ 131:7–8; 138:17. ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
34 *ກ* 2 ນຟ 9:8–10.
*ຂ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
35 *ກ* ຄພ 130:22.
*ຂ* 1 ກຣທ 3:16–17.
36 *ກ* ຄມພ ພຣະເຢຊູຄຣິດ—ລັດສະໝີພາບຂອງພຣະເຢຊູຄຣິດ; ລັດສະໝີພາບ.
*ຂ* ຄພ 130:18–19; ອຣຣ 3:19. ຄມພ ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ.
*ຄ* ຄພ 88:6–13.
37 *ກ* ມຊ 1:12–16. ຄມພ ມານ.
38 *ກ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຂ* ມຊຍ 27:24–26; ມຊ 5:9; ຫຼຊ 1:3. ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຄ* ຄມພ ການຕົກຂອງອາດາມ ແລະ ເອວາ.
*ງ* ມຣນ 8:8, 12, 22; ຄພ 29:46–47. ຄມພ ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ.
39 *ກ* ມທ 13:18–19; 2 ກຣທ 4:3–4; ແອວ 12:9–11.

ມະນຸດ, ແລະ ເປັນເພາະ [ຂ]ຮີດຄອງປະເພ
ນີຂອງບັນພະບຸລຸດຂອງພວກເຂົາ.
40 ແຕ່ ເຮົາໄດ້ບັນຊາພວກເຈົ້າໃຫ້ລ້ຽງດູ
[ກ]ລູກໆຂອງພວກເຈົ້າໃນຄວາມສະຫວ່າງ
ແລະ ຄວາມຈິງ.
41 ແຕ່ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າ ຜູ້ຮັບໃຊ້ຂອງເຮົາ ເຟຣ໌ເດຣິກ
ຈີ ວິວລຽມສ໌, ວ່າເຈົ້າໄດ້ເຮັດໃຫ້ຕົນເອງຢູ່
ພາຍໃຕ້ການກ່າວໂທດນີ້;
42 ເຈົ້າບໍ່ໄດ້ [ກ]ສິດສອນຄວາມສະຫວ່າງ
ແລະ ຄວາມຈິງໃຫ້ແກ່ລູກໆຂອງເຈົ້າ, ຕາມ
ບັນຍັດ; ແລະ ຄົນຊົ່ວຄົນນັ້ນໄດ້ມີອຳນາດ
ເໜືອເຈົ້າ, ໃນຕອນນີ້, ແລະ ນີ້ຄືສາເຫດ
ຂອງຄວາມທຸກທໍລະມານຂອງເຈົ້າ.
43 ແລະ ບັດນີ້ເຮົາມອບບັນຍັດຂໍ້ໜຶ່ງ
ໃຫ້ແກ່ເຈົ້າ—ຖ້າຫາກເຈົ້າຈະຖືກປົດປ່ອຍ
ເຈົ້າຕ້ອງຈັດບ້ານເຮືອນຂອງເຈົ້າໃຫ້ເປັນ
[ກ]ລະບຽບ, ເພາະມີຫລາຍສິ່ງຫລາຍຢ່າງທີ່
ບໍ່ຖືກຕ້ອງໃນບ້ານເຮືອນຂອງເຈົ້າ.
44 ຕາມຄວາມຈິງແລ້ວ, ເຮົາກ່າວກັບ
ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ, ວ່າໃນ
ບາງເລື່ອງລາວບໍ່ໄດ້ຮັກສາບັນຍັດກ່ຽວ
ກັບລູກໆຂອງລາວ; ສະນັ້ນ, ກ່ອນອື່ນ
ໝົດຕ້ອງຈັດບ້ານເຮືອນຂອງເຈົ້າໃຫ້ເປັນ
ລະບຽບເສຍກ່ອນ.
45 ຕາມຄວາມຈິງແລ້ວ, ເຮົາກັບຜູ້ຮັບ
ໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຫລື
ອີກຄຳໜຶ່ງ, ເຮົາຈະເອີ້ນພວກເຈົ້າວ່າ
[ກ]ເພື່ອນ, ເພາະພວກເຈົ້າເປັນເພື່ອນຂອງ
ເຮົາ, ແລະ ພວກເຈົ້າຈະໄດ້ຮັບມູນມໍລະດົກ
ຮ່ວມກັບເຮົາ—
46 ເຮົາເອີ້ນພວກເຈົ້າວ່າເປັນ [ກ]ຜູ້ຮັບໃຊ້
ເພື່ອເຫັນແກ່ໂລກ, ແລະ ພວກເຈົ້າເປັນຜູ້
ຮັບໃຊ້ຂອງພວກເຂົາເພື່ອເຫັນແກ່ເຮົາ—
47 ແລະ ບັດນີ້, ຕາມຄວາມຈິງແລ້ວ
ເຮົາກ່າວກັບ ໂຈເຊັບ ສະມິດ, ຜູ້ລູກ, ຫລື
ເຈົ້າບໍ່ໄດ້ຮັກສາບັນຍັດ, ແລະ ຈຳເປັນຕ້ອງ
ຢືນຮັບ [ກ]ການຕິຕຽນຢູ່ຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າ;
48 [ກ]ຄອບຄົວຂອງເຈົ້າຈຳເປັນຕ້ອງກັບ
ໃຈ ແລະ ປະຖິ້ມບາງສິ່ງບາງຢ່າງ, ແລະ
ໃຫ້ເອົາໃຈໃສ່ກັບຄຳເວົ້າຂອງເຈົ້າຢ່າງ
ຕັ້ງໃຈ, ຖ້າບໍ່ດັ່ງນັ້ນຈະຖືກຍ້າຍອອກຈາກ
ບ່ອນຂອງພວກເຂົາ.
49 ສິ່ງໃດກໍຕາມທີ່ເຮົາກ່າວກັບຄົນໜຶ່ງ
ກໍຄືກັນກັບເຮົາກ່າວກັບທຸກຄົນ; ຈົ່ງ [ກ]ອະທິ
ຖານສະເໝີ ຖ້າບໍ່ດັ່ງນັ້ນຄົນຊົ່ວຄົນນັ້ນຈະ
ມີອຳນາດໃນຕົວເຈົ້າ, ແລະ ຍ້າຍເຈົ້າອອກ
ຈາກບ່ອນຂອງເຈົ້າ.
50 ຜູ້ຮັບໃຊ້ຂອງເຮົາ ນີວເອັນ ເຄ ວິດນີ
ກໍຄືກັນ, ອະທິການຂອງສາດສະໜາຈັກ
ຂອງເຮົາ, ຕ້ອງຖືກຕິສອນ, ແລະ ຈັດຄອບ
ຄົວຂອງລາວໃຫ້ເປັນລະບຽບ, ແລະ ເບິ່ງ
ວ່າພວກເຂົາພາກພຽນ ແລະ ເປັນຫ່ວງ
ເປັນໃຍກັບບ້ານເຮືອນຫລາຍຂຶ້ນ, ແລະ
ອະທິຖານສະເໝີ, ຖ້າບໍ່ດັ່ງນັ້ນ ພວກເຂົາ
ຈະຖືກຍ້າຍອອກຈາກ [ກ]ບ່ອນຂອງພວກ
ເຂົາ.
51 ບັດນີ້, ເຮົາກ່າວກັບພວກເຈົ້າ, ເພື່ອນ
ທັງຫລາຍຂອງເຮົາ, ໃຫ້ຜູ້ຮັບໃຊ້ຂອງເຮົາ
ຊິດນີ ຣິກດອນ ອອກເດີນທາງ, ແລະ ໃຫ້
ຟ້າວໄປ, ແລະ ປະກາດປີທີ່ [ກ]ໂປດປານ

39 *ຂ* ອຊກ 20:18–19;
ແອວ 3:8.
ຄມພ ປະເພນີ.
40 *ກ* ຄມພ ຄອບຄົວ—ໜ້າທີ່
ຮັບຜິດຊອບຂອງພໍ່ແມ່.
42 *ກ* 1 ຊມອ 3:11–13;
ຄພ 68:25–31.
43 *ກ* 1 ຕມທ 3:4–5.
45 *ກ* ຄພ 84:63; 88:62.
46 *ກ* ລລວ 25:55; 1 ນຟ 21:3–8.
ຄມພ ຮັບໃຊ້, ການຮັບໃຊ້.
47 *ກ* ຄພ 95:1–2.
ຄມພ ຕິສອນ, ການຕິສອນ.
48 *ກ* ຄມພ ຄອບຄົວ—ໜ້າທີ່
ຮັບຜິດຊອບຂອງລູກ.
49 *ກ* 3 ນຟ 18:15–21.
50 *ກ* ຄພ 64:40.
51 *ກ* ລກ 4:19.

ຂອງພຣະຜູ້ເປັນເຈົ້າ, ແລະ ພຣະກິດຕິຄຸນ
ແຫ່ງ ຄວາມລອດ, ດັ່ງທີ່ເຮົາຈະ ມອບ ໃຫ້
ລາວກ່າວ; ແລະ ໂດຍການອະທິຖານດ້ວຍ
ສັດທາ ຂອງພວກເຈົ້າພ້ອມດ້ວຍ ຄວາມ
ເຫັນຊອບ ນຳກັນ ເຮົາຈະສະໜັບສະໜູນ
ລາວ.
52 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ສະມິດ, ຜູ້ລູກ, ແລະ ເຟຣ໌ເດຣິກ ຈີ ວິວລຽມສ໌
ຟ້າວ ໄປຄືກັນ, ແລະ ມັນຈະຖືກມອບໃຫ້
ແກ່ ເຂົາ ເຈົ້າ ຕາມການອະທິ ຖານ ດ້ວຍ
ສັດທາ; ແລະ ຕາບໃດທີ່ພວກເຈົ້າຍັງຮັກ
ສາຄຳກ່າວຂອງເຮົາ, ພວກເຈົ້າຈະບໍ່ສັບ
ສົນຢູ່ໃນໂລກນີ້, ຫລື ໃນໂລກທີ່ຈະມາເຖິງ.
53 ແລະ, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບ ພວກເຈົ້າວ່າ ມັນ ເປັນ ຄວາມ ປະສົງ
ຂອງ ເຮົາ ທີ່ພວກ ເຈົ້າ ຈະ ຟ້າວ [ກ]ແປພຣະ
ຄຳພີຂອງເຮົາ, ແລະ [ຂ]ມີ [ຄ]ຄວາມຮູ້ເລື່ອງ
ປະຫວັດສາດ, ແລະ ເລື່ອງປະເທດຕ່າງໆ,
ແລະ ອານາຈັກຕ່າງໆ, ເລື່ອງກົດຂອງພຣະ
ເຈົ້າ ແລະ ຂອງມະນຸດ, ແລະ ທັງໝົດນີ້
ເພື່ອຄວາມລອດຂອງຊີໂອນ. ອາແມນ.

# ພາກທີ 94

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 2 ເດືອນສິງຫາ 1833. ໄຮຣຳ ສະມິດ, ເຣນໂນ ຄາຫູນ, ແລະ ແຈເຣັດ ຄາດເທີ ໄດ້ຖືກແຕ່ງຕັ້ງໃຫ້ເປັນຄະນະກຳມະການຝ່າຍການສ້າງອາຄານຂອງສາດສະໜາຈັກ.*

*1–9, ພຣະຜູ້ເປັນເຈົ້າປະທານພຣະບັນຍັດຂໍ້ໜຶ່ງທີ່ກ່ຽວກັບການກໍ່ສ້າງບ້ານສຳລັບວຽກງານຂອງຝ່າຍປະທານສູງສຸດ; 10–12, ຈະຕ້ອງສ້າງໂຮງພິມ; 13–17, ມີການມອບໝາຍມູນມໍລະດົກບາງຢ່າງ.*

1 ແລະ ອີກ ເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບ ພວກເຈົ້າ, [ກ]ເພື່ອນ
ຂອງເຮົາ, ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້
ແກ່ພວກເຈົ້າ, ວ່າພວກເຈົ້າຈະເລີ່ມງານ
ວາງແຜນ ແລະ ຕຽມເລີ່ມຕົ້ນສ້າງພື້ນຖານ
ເມືອງຂອງ [ຂ]ສະເຕກແຫ່ງຊີໂອນ, ຢູ່ບ່ອນ
ນີ້ໃນແຜ່ນດິນຂອງເມືອງເຄີດແລນ, ໂດຍ
ການເລີ່ມຕົ້ນທີ່ບ້ານຂອງເຮົາກ່ອນ.
2 ແລະ ຈົ່ງເບິ່ງ, ມັນຕ້ອງເປັນໄປຕາມ
[ກ]ແບບແຜນຊຶ່ງເຮົາໄດ້ມອບໃຫ້ແກ່ພວກ
ເຈົ້າ.
3 ແລະ ໃຫ້ອຸທິດຖວາຍດິນແປງທຳອິດ
ທີ່ຢູ່ທາງໃຕ້ແກ່ເຮົາເພື່ອສ້າງບ້ານສຳລັບ
ຝ່າຍ ປະທານສູງສຸດ, ສຳລັບວຽກງານ
ຂອງຝ່າຍປະທານສູງສຸດ, ໃນການຮັບ
ການ ເປີດເຜີຍ; ແລະ ສຳລັບ ວຽກງານ
ຂອງການປະຕິບັດສາດສະໜາກິດຂອງ
[ກ]ຝ່າຍປະທານສູງສຸດ, ໃນທຸກສິ່ງທັງປວງ
ທີ່ກ່ຽວຂ້ອງກັບສາດສະໜາຈັກ ແລະ ອາ
ນາຈັກ.
4 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າວ່າ ຈົ່ງສ້າງ ມັນ ໃຫ້ກວ້າງຫ້າສິບຫ້າ

53 *ກ* ຄມພ ການແປຂອງ ໂຈເຊັບ ສະມິດ (ປຈສ).
*ຂ* ຄພ 88:76–80, 118.
*ຄ* ຄມພ ຄວາມຮູ້.
**94** 1 *ກ* ຄພ 93:45.
*ຂ* ຄມພ ສະເຕກ.
2 *ກ* ຄພ 52:14–15.
3 *ກ* ຄພ 107:9, 22.

ຟິດ (16 ແມັດ) ແລະ ຍາວຫົກສິບຫ້າຟິດ
(19 ແມັດ), ຢູ່ຂ້າງໃນນັ້ນ.
5 ແລະ ຈະມີຊັ້ນລຸ່ມ ແລະ ຊັ້ນເທິງນຳ
ອີກ, ຕາມແບບແຜນຊຶ່ງມັນຈະຖືກມອບໃຫ້
ແກ່ພວກເຈົ້າຫລັງຈາກນີ້.
6 ແລະ ມັນຈະຕ້ອງຖືກອຸທິດຖວາຍໃຫ້
ແກ່ພຣະຜູ້ເປັນເຈົ້າຈາກພື້ນຖານໃນນັ້ນ,
ຕາມລະບຽບຂອງຖານະປະໂລຫິດ, ຕາມ
ແບບແຜນຊຶ່ງມັນຈະຖືກມອບໃຫ້ແກ່ພວກ
ເຈົ້າຫລັງຈາກນີ້.
7 ແລະ ບ້ານທັງຫລັງຈະຕ້ອງຖືກອຸທິດ
ຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າສຳລັບວຽກ
ງານຂອງຝ່າຍປະທານສູງສຸດ.
8 ແລະ ພວກເຈົ້າຈະບໍ່ຍອມໃຫ້ [ກ]ສິ່ງທີ່ບໍ່
ສະອາດໃດໆເຂົ້າມາໃນນີ້; ແລະ [ຂ]ລັດສະ
ໝີພາບຂອງເຮົາຈະຢູ່ໃນທີ່ນັ້ນ, ແລະ ເຮົາ
ຈະປະທັບຢູ່ໃນທີ່ນັ້ນ.
9 ແຕ່ຖ້າຫາກ [ກ]ສິ່ງທີ່ບໍ່ສະອາດໃດໆໄດ້
ເຂົ້າມາ, ລັດສະໝີພາບຂອງເຮົາຈະບໍ່ຢູ່ໃນ
ທີ່ນັ້ນ; ແລະ ເຮົາຈະບໍ່ເຂົ້າໄປໃນທີ່ນັ້ນ.
10 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ດິນແປງທີ
ສອງຢູ່ທາງໃຕ້ນັ້ນ ໃຫ້ອຸທິດຖວາຍມັນໃຫ້
ແກ່ເຮົາສຳລັບການສ້າງບ້ານໃຫ້ແກ່ເຮົາ,
ເພື່ອວຽກງານແຫ່ງ [ກ]ການພິມ [ຂ]ການແປ
ພຣະຄຳພີຂອງເຮົາ, ແລະ ທຸກສິ່ງທັງປວງ
ອັນໃດກໍຕາມທີ່ເຮົາຈະບັນຊາພວກເຈົ້າ.
11 ແລະ ມັນຈະກວ້າງຫ້າສິບຫ້າຟິດ
(16 ແມັດ) ແລະ ຍາວຫົກສິບຫ້າຟິດ
(19 ແມັດ), ຢູ່ຂ້າງໃນ; ແລະ ຈະມີຊັ້ນລຸ່ມ
ແລະ ຊັ້ນເທິງນຳອີກ.
12 ແລະ ບ້ານທັງຫລັງຈະຕ້ອງຖືກອຸທິດ
ຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າຈາກພື້ນຖານ
ໃນນັ້ນ, ສຳລັບວຽກງານແຫ່ງການພິມ,
ໃນທຸກສິ່ງທັງປວງອັນໃດກໍຕາມທີ່ເຮົາຈະ
ບັນຊາພວກເຈົ້າ, ເພື່ອໃຫ້ສັກສິດ, ບໍ່ໝົ່ນ
ໝອງ, ຕາມແບບແຜນໃນທຸກສິ່ງທັງປວງ
ດັ່ງທີ່ມັນຈະຖືກມອບໃຫ້ແກ່ພວກເຈົ້າ.
13 ແລະ ດິນແປງທີສາມ ຈົ່ງມອບມັນໃຫ້
ແກ່ຜູ້ຮັບໃຊ້ຂອງເຮົາ ໄຮຣຳ ສະມິດ ເພື່ອ
ເປັນມູນມໍລະດົກຂອງລາວ.
14 ແລະ ດິນແປງທຳອິດ ແລະ ທີສອງ
ຢູ່ທາງເໜືອ ຈົ່ງມອບໃຫ້ແກ່ຜູ້ຮັບໃຊ້ຂອງ
ເຮົາ ເຣໂນນ ຄາຫູນ ແລະ ແຈເຣັດ ຄາດເທີ
ເພື່ອເປັນມູນມໍລະດົກຂອງພວກເຂົາ—
15 ເພື່ອວ່າພວກເຂົາຈະໄດ້ເຮັດວຽກ
ງານ ຊຶ່ງເຮົາໄດ້ກຳນົດໃຫ້ແກ່ພວກເຂົາ, ທີ່
ເປັນຄະນະກຳມະການສ້າງບ້ານຂອງເຮົາ,
ຕາມພຣະບັນຍັດ, ຊຶ່ງເຮົາ, ອົງພຣະຜູ້ເປັນ
ເຈົ້າ, ໄດ້ປະທານໃຫ້ແກ່ພວກເຈົ້າ.
16 ບ້ານສອງຫລັງນີ້ຈະບໍ່ຖືກສ້າງຂຶ້ນ
ຈົນກວ່າເຮົາຈະມອບບັນຍັດໃຫ້ແກ່ພວກ
ເຈົ້າກ່ຽວກັບມັນ.
17 ແລະ ບັດນີ້ ເຮົາຈະບໍ່ມອບໃຫ້ພວກ
ເຈົ້າອີກໃນເວລານີ້. ອາແມນ.

## ພາກທີ 95

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດ*

8 *ກ* ລກ 19:45–46;
ຄພ 109:16–20.
*ຂ* 1 ກສ 8:10–11.
ຄມພ ລັດສະໝີພາບ.
9 *ກ* ຄພ 97:15–17.
10 *ກ* ຄພ 104:58–59.
*ຂ* ຄມພ ການແປຂອງ
ໂຈເຊັບ ສະມິດ (ປຈສ).

*ໂອໄຮໂອ, ວັນທີ 1 ເດືອນມິຖຸນາ, 1833. ການເປີດເຜີຍນີ້ເປັນຄຳແນະນຳທີ່ຕໍ່ເນື່ອງຈາກສະຫວັນເລື່ອງການສ້າງບ້ານສຳລັບການນະມັດສະການ ແລະ ການແນະນຳ, ບ້ານຂອງພຣະຜູ້ເປັນເຈົ້າ (ເບິ່ງ ພາກທີ 88:119–136).*

*1–6, ໄພ່ພົນຂອງພຣະເຈົ້າຖືກຕີສອນເນື່ອງຈາກຄວາມລົ້ມເຫລວທີ່ຈະສ້າງບ້ານຂອງພຣະຜູ້ເປັນເຈົ້າ; 7–10, ພຣະຜູ້ເປັນເຈົ້າປາດຖະໜາທີ່ຈະໃຊ້ບ້ານຂອງພຣະອົງເພື່ອມອບພອນໃຫ້ແກ່ຜູ້ຄົນຂອງພຣະອົງ ດ້ວຍອຳນາດຈາກເບື້ອງບົນ; 11–17, ບ້ານດັ່ງກ່າວຕ້ອງຖືກອຸທິດຖວາຍເປັນບ່ອນນະມັດສະການ ແລະ ເປັນໂຮງຮຽນຂອງກຸ່ມອັກຄະສາວົກ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບພວກເຈົ້າຜູ້ທີ່ເຮົາຮັກ, ແລະ ຜູ້ທີ່ເຮົາຮັກ ເຮົາຈະ [ກ]ຕີສອນດ້ວຍເພື່ອວ່າບາບຂອງພວກເຂົາຈະໄດ້ຮັບ [ຂ]ການອະໄພ, ເພາະດ້ວຍການຕີສອນ ເຮົາຈຶ່ງຕຽມທາງສຳລັບ [ຄ]ການປົດປ່ອຍພວກເຂົາໃນທຸກສິ່ງທັງປວງຈາກ [ງ]ການລໍ້ລວງ, ແລະ ເຮົາໄດ້ຮັກພວກເຈົ້າຕະຫລອດມາ—

2 ດັ່ງນັ້ນ, ພວກເຈົ້າຕ້ອງຖືກຕີສອນ ແລະ ຢືນຮັບເອົາການຕິຕຽນຢູ່ຕໍ່ໜ້າເຮົາ;

3 ເພາະພວກເຈົ້າໄດ້ເຮັດບາບຕໍ່ເຮົາ ຊຶ່ງເປັນບາບທີ່ຮ້າຍແຮງຫລາຍ, ໃນການນັ້ນພວກເຈົ້າບໍ່ໄດ້ພິຈາລະນາບັນຍັດຂໍ້ຍິ່ງໃຫຍ່ໃນທຸກສິ່ງທັງປວງ, ທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າກ່ຽວກັບການສ້າງ [ກ]ບ້ານຂອງເຮົາ;

4 ເພາະການຕຽມ ຊຶ່ງໃນນັ້ນເຮົາປາດຖະໜາ ທີ່ຈະຕຽມອັກຄະສາວົກຂອງເຮົາໃຫ້ [ກ]ລິງ່າສວນອະງຸ່ນຂອງເຮົາເປັນເທື່ອສຸດທ້າຍ, ເພື່ອວ່າເຮົາຈະໄດ້ເຮັດ [ຂ]ການກະທຳອັນປະຫລາດຂອງເຮົາ, ເພື່ອວ່າເຮົາຈະໄດ້ [ຄ]ເທວິນຍານຂອງເຮົາ ລົງມາໃຫ້ເນື້ອໜັງທັງປວງ—

5 ແຕ່ ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມີຫລາຍຄົນຢູ່ໃນບັນດາພວກເຈົ້າທີ່ໄດ້ຖືກແຕ່ງຕັ້ງ, ຜູ້ທີ່ເຮົາໄດ້ເອີ້ນ ແຕ່ມີພຽງໜ້ອຍຄົນໃນບັນດາພວກເຂົາທີ່ຖືກ [ກ]ເລືອກ.

6 ຄົນເຫລົ່ານັ້ນທີ່ບໍ່ໄດ້ຖືກເລືອກໄດ້ເຮັດບາບທີ່ຮ້າຍແຮງຫລາຍ, ໃນການນັ້ນພວກເຂົາພວມເດີນໄປໃນ [ກ]ຄວາມມືດໃນຕອນທ່ຽງວັນ.

7 ແລະ ດ້ວຍເຫດນີ້ ເຮົາຈຶ່ງປະທານບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າ ວ່າພວກເຈົ້າຄວນເອີ້ນໃຫ້ມີ [ກ]ການຊຸມນຸມທີ່ສັກສິດຂອງພວກເຈົ້າ, ເພື່ອວ່າ [ຂ]ການຖືສິນອົດເຂົ້າ

**95** 1 *ກ* ພບຍ 11:1–8; ສພສ 13:18; ຮຮ 12:5–11; ຮລມ 15:3; ຄພ 101:4–5; 105:6. ຄມພ ຕີສອນ, ການຕີສອນ.
*ຂ* ຄມພ ອະໄພ, ໃຫ້ອະໄພ.
*ຄ* 1 ກຣທ 10:13.
*ງ* ຄມພ ລໍ້ລວງ, ການລໍ້ລວງ.
3 *ກ* ຮກ 1:7–11; ຄພ 88:119. ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
4 *ກ* ຢຄ 5:61–75; ຄພ 24:19; 33:3–4. ຄມພ ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.
*ຂ* ອຊຢ 28:21; ຄພ 101:95.
*ຄ* ສພສ 1:23; ຢອ 2:28; ຄພ 19:38. ຄມພ ຂອງປະທານແຫ່ງພຣະວິນຍານ; ພຣະວິນຍານບໍລິສຸດ.
5 *ກ* ມທ 20:16; ຄພ 105:35–37; 121:34–40. ຄມພ ເລືອກ, ການເລືອກ.
6 *ກ* ຄມພ ຄວາມມືດທາງວິນຍານ.
7 *ກ* ຄພ 88:70, 74–82, 117–120.
*ຂ* ຄມພ ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.

ຂອງພວກເຈົ້າ ແລະ ຄວາມໂສກເສົ້າຂອງພວກເຈົ້າຈະໄດ້ຂຶ້ນມາເຖິງພຣະກັນຂອງພຣະຜູ້ເປັນເຈົ້າແຫ່ງ [ຄ]ຊາບາໂອດ, ຊຶ່ງໂດຍການແປຄວາມໝາຍຄື [ງ]ພຣະຜູ້ສ້າງວັນທຳອິດ, ເປັນຕົ້ນ ແລະ ທີ່ສຸດ.

8 ແທ້ຈິງແລ້ວ, ຕາມຄວາມຈິງ ເຮົາກ່າວກັບພວກເຈົ້າວ່າ ເຮົາໄດ້ມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າ ວ່າພວກເຈົ້າຄວນສ້າງບ້ານຫລັງໜຶ່ງ, ຊຶ່ງໃນບ້ານຫລັງນັ້ນເຮົາປາດຖະໜາທີ່ຈະ [ກ]ມອບພອນໃຫ້ແກ່ຄົນເຫລົ່ານັ້ນທີ່ເຮົາໄດ້ເລືອກໄວ້ດ້ວຍອຳນາດຈາກເບື້ອງບົນ;

9 ເພາະນີ້ຄື [ກ]ຄຳສັນຍາຂອງພຣະບິດາແກ່ພວກເຈົ້າ; ສະນັ້ນເຮົາຈຶ່ງບັນຊາພວກເຈົ້າໃຫ້ຢູ່ຕໍ່ໄປ, ແມ່ນແຕ່ເຊັ່ນດຽວກັບອັກຄະສາວົກຂອງເຮົາທີ່ເຢຣູຊາເລັມ.

10 ເຖິງຢ່າງໃດກໍຕາມ, ຜູ້ຮັບໃຊ້ຂອງເຮົາໄດ້ເຮັດບາບທີ່ຮ້າຍແຮງຫລາຍ; ແລະ ມີ [ກ]ການໂຕ້ຖຽງກັນເກີດຂຶ້ນຢູ່ [ຂ]ໂຮງຮຽນຂອງສາດສະດາ; ຊຶ່ງເປັນໜ້າໂສກເສົ້າຕໍ່ເຮົາ, ພຣະຜູ້ເປັນເຈົ້າຂອງພວກເຈົ້າໄດ້ກ່າວ; ສະນັ້ນ ເຮົາຈຶ່ງໄດ້ສົ່ງພວກເຂົາອອກໄປເພື່ອຖືກຕີສອນ.

11 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມັນເປັນຄວາມປະສົງຂອງເຮົາທີ່ພວກເຈົ້າຈະສ້າງບ້ານຫລັງໜຶ່ງ. ຖ້າຫາກພວກເຈົ້າຮັກສາບັນຍັດຂອງເຮົາ, ແລ້ວພວກເຈົ້າຈະມີພະລັງທີ່ຈະສ້າງມັນ.

12 ຖ້າຫາກພວກເຈົ້າບໍ່ [ກ]ຮັກສາບັນຍັດຂອງເຮົາ, ແລ້ວ [ຂ]ຄວາມຮັກຂອງພຣະບິດາຈະບໍ່ຢູ່ກັບພວກເຈົ້າອີກຕໍ່ໄປ, ສະນັ້ນ ພວກເຈົ້າຈະເດີນໄປໃນຄວາມມືດ.

13 ບັດນີ້ ນີ້ຄືປັນຍາ, ແລະ ພຣະດຳລັດຂອງພຣະຜູ້ເປັນເຈົ້າ—ຈົ່ງສ້າງບ້ານຫລັງນັ້ນ, ບໍ່ແມ່ນຕາມວິທີຂອງໂລກ, ເພາະເຮົາບໍ່ໄດ້ໃຫ້ພວກເຈົ້າເພື່ອພວກເຈົ້າຈະດຳລົງຊີວິດຕາມວິທີຂອງໂລກ;

14 ສະນັ້ນ, ຈົ່ງສ້າງມັນຕາມວິທີຊຶ່ງເຮົາຈະສະແດງແກ່ພວກເຈົ້າສາມຄົນ, ຜູ້ທີ່ພວກເຈົ້າຈະກຳນົດ ແລະ ແຕ່ງຕັ້ງສູ່ອຳນາດນີ້.

15 ແລະ ຂະໜາດໃນນັ້ນຈະກວ້າງຫ້າສິບຫ້າຟິດ (16 ແມັດ), ແລະ ຍາວຫົກສິບຫ້າຟິດ (19 ແມັດ), ຢູ່ຂ້າງໃນນັ້ນ.

16 ແລະ ຈົ່ງອຸທິດຖວາຍສ່ວນຊັ້ນລຸ່ມຂອງຂ້າງໃນໃຫ້ແກ່ເຮົາສຳລັບການຖວາຍສິນລະລຶກ, ແລະ ສຳລັບການສັ່ງສອນ, ແລະ ການຖືສິນອົດເຂົ້າຂອງພວກເຈົ້າ, ແລະ ການອະທິຖານຂອງພວກເຈົ້າ, ແລະ [ກ]ການຖວາຍຄວາມປາດຖະໜາອັນບໍລິສຸດທີ່ສຸດຂອງພວກເຈົ້າແກ່ເຮົາ, ພຣະຜູ້ເປັນເຈົ້າຂອງພວກເຈົ້າໄດ້ກ່າວ.

17 ແລະ ຈົ່ງອຸທິດຖວາຍສ່ວນຢູ່ຊັ້ນເທິງຂອງຂ້າງໃນໃຫ້ແກ່ເຮົາສຳລັບໂຮງຮຽນຂອງອັກຄະສາວົກຂອງເຮົາ, ພຣະບຸດ [ກ]ອາມັນກ່າວ; ຫລື ອີກຄຳໜຶ່ງ, ອາລະຟາ; ຫລື ອີກຄຳໜຶ່ງ, ໂອເມຄາ; ແມ່ນແຕ່ ພຣະເຢຊູຄຣິດ [ຂ]ພຣະຜູ້ເປັນເຈົ້າຂອງພວກເຈົ້າ. ອາແມນ.

7 *ຄ* ຄມພ ເຢໂຮວາ.
*ງ* ຄມພ ສ້າງ, ການສ້າງ.
8 *ກ* ຄພ 38:32; 39:15; 43:16; 110:9–10. ຄມພ ຂອງປະທານສັກສິດ.
9 *ກ* ລກ 24:49.
10 *ກ* ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຂ* ຄມພ ໂຮງຮຽນຂອງສາດສະດາ.
12 *ກ* ຢຮ 15:10.
*ຂ* 1 ຢຮ 2:10, 15.
16 *ກ* ຄພ 59:9–14.
17 *ກ* ຄພ 78:20.
*ຂ* ຄມພ ພຣະຜູ້ເປັນເຈົ້າ.

# ພາກທີ 96

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໂດຍສະແດງໃຫ້ເຫັນລະບຽບຂອງເມືອງ ຫລື ສະເຕກແຫ່ງຊີໂອນ ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 4 ເດືອນມິຖຸນາ, 1833, ປະທານໃຫ້ເປັນຕົວຢ່າງແກ່ໄພ່ພົນຂອງພຣະເຈົ້າໃນເມືອງເຄີດແລນ. ເຫດການເທື່ອນັ້ນເປັນກອງປະຊຸມໃຫຍ່ຂອງກຸ່ມມະຫາປະໂລຫິດ, ແລະ ຫົວຂໍ້ສຳຄັນຂອງການພິຈາລະນາຄືການຈັດການກັບທີ່ດິນບາງຕອນ, ທີ່ເອີ້ນວ່າ French farm (ບ້ານສວນຂອງຄອບຄົວຝະເຣັ່ນ), ທີ່ສາດສະໜາຈັກເປັນເຈົ້າຂອງ ຢູ່ໃກ້ເມືອງເຄີດແລນ. ເນື່ອງຈາກວ່າກອງປະຊຸມໃຫຍ່ບໍ່ສາມາດ ເຫັນພ້ອມກັນວ່າຄົນໃດຄວນເປັນຜູ້ດູແລບ້ານສວນແຫ່ງນັ້ນ, ທຸກຄົນຈຶ່ງເຫັນພ້ອມທີ່ຈະທູນຖາມພຣະຜູ້ເປັນເຈົ້າກ່ຽວກັບເລື່ອງນີ້.*

*1, ຕ້ອງ ເຮັດ ໃຫ້ ສະເຕກ ເຄີດແລນ ແຫ່ງຊີໂອນເຂັ້ມແຂງຂຶ້ນ; 2–5, ອະທິການຕ້ອງແບ່ງປັນມູນມໍລະດົກໃຫ້ໄພ່ພົນຂອງພຣະເຈົ້າ; 6–9, ຈອນ ຈອນສັນ ຕ້ອງເປັນສະມາຊິກຂອງລະບົບເອກະພາບ.*

1 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ ນີ້ຄືປັນຍາ, ຊຶ່ງໂດຍສິ່ງນີ້ພວກເຈົ້າຈະຮູ້ວິທີທີ່ຈະເຮັດແນວໃດກ່ຽວກັບເລື່ອງນີ້, ເພາະເຮົາເຫັນສົມຄວນທີ່ຈະເຮັດໃຫ້ [ກ]ສະເຕກທີ່ເຮົາໄດ້ຕັ້ງໄວ້ເປັນກຳລັງຂອງຊີໂອນ ຖືກເຮັດໃຫ້ເຂັ້ມແຂງຂຶ້ນ.

2 ສະນັ້ນ, ໃຫ້ຜູ້ຮັບໃຊ້ຂອງເຮົາ ນິວເອັນເຄ ວິດນີ ດູແລບ່ອນທີ່ເອີ່ຍເຖິງໃນບັນດາພວກເຈົ້າ, ຊຶ່ງໃນນັ້ນ ເຮົາມີແຜນທີ່ຈະສ້າງບ້ານສັກສິດຂອງເຮົາ.

3 ແລະ ອີກເທື່ອໜຶ່ງ, ໃຫ້ແບ່ງມັນເປັນແປງໆ, ຕາມປັນຍາ, ເພື່ອຜົນປະໂຫຍດຂອງຄົນທີ່ສະແຫວງຫາມູນມໍລະດົກ, ດັ່ງທີ່ມັນຈະຖືກພິຈາລະນາໃນສະພາໃນບັນດາພວກເຈົ້າ.

4 ສະນັ້ນ, ຈົ່ງລະວັງວ່າ ພວກເຈົ້າຈັດການກັບເລື່ອງນີ້, ແລະ ສ່ວນນັ້ນທີ່ຈຳເປັນຕໍ່ຜົນປະໂຫຍດຂອງ [ກ]ລະບົບຂອງເຮົາ, ເພື່ອຈຸດປະສົງຂອງການນຳຄຳຂອງເຮົາອອກໄປສູ່ລູກຫລານມະນຸດ.

5 ເພາະ ຈົ່ງ ເບິ່ງ, ຕາມຄວາມຈິງແລ້ວເຮົາກ່າວກັບພວກເຈົ້າວ່າ ເຮົາເຫັນວ່າສິ່ງນີ້ເໝາະສົມທີ່ສຸດ, ວ່າຄຳຂອງເຮົາຈະອອກໄປສູ່ລູກຫລານມະນຸດ, ເພື່ອຈຸດປະສົງທີ່ຈະເຮັດໃຫ້ຫົວໃຈຂອງລູກຫລານມະນຸດອ່ອນລົງສຳລັບຄວາມດີຂອງພວກເຈົ້າ. ແມ່ນເປັນດັ່ງນັ້ນ. ອາແມນ.

6 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມັນເປັນຄວາມສະຫລຽວສະຫລາດ ແລະ ເຮົາເຫັນວ່າເໝາະສົມ, ທີ່ຜູ້ຮັບໃຊ້ຂອງເຮົາ ຈອນ ຈອນສັນ ຜູ້ທີ່ເຮົາໄດ້ຮັບເອົາເຄື່ອງຖວາຍຂອງລາວແລ້ວ, ແລະ ຜູ້ທີ່ເຮົາໄດ້ຍິນຄຳອະທິຖານຂອງລາວແລ້ວ, ຜູ້ຊຶ່ງເຮົາໄດ້ສັນຍາວ່າຈະປະທານຊີວິດນິລັນດອນໃຫ້ ຕາບໃດທີ່ລາວຍັງຮັກສາບັນຍັດຂອງເຮົານັບແຕ່ນີ້ເປັນຕົ້ນໄປ—

7 ເພາະ ລາວ ເປັນ ຜູ້ ສືບ ຕະ ກຸນ ຂອງ [ກ]ໂຢເຊັບ ແລະ ເປັນຜູ້ຮັບສ່ວນພອນແຫ່ງ

---

**96** 1*ກ* ອຊຢ 33:20; 54:2. ຄມພ ສະເຕກ.

4*ກ* ຄພ 78:3–4. ຄມພ ລະບົບເອກະພາບ.

7*ກ* ຄມພ ໂຢເຊັບ, ລູກຊາຍຂອງຢາໂຄບ.

ຄຳສັນຍາທີ່ໄດ້ເຮັດໄວ້ກັບບັນພະບຸລຸດຂອງລາວ—

8 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາເຫັນສົມຄວນທີ່ລາວຈະກາຍເປັນສະມາຊິກ ຂອງລະບົບ, ເພື່ອວ່າລາວຈະໄດ້ຊ່ວຍເຫລືອໃນການນຳຄຳຂອງເຮົາອອກໄປສູ່ລູກຫລານມະນຸດ.

9 ສະນັ້ນ ພວກເຈົ້າຈົ່ງແຕ່ງຕັ້ງລາວສູ່ພອນນີ້, ແລະ ລາວຈະສະແຫວງຫາຢ່າງພາກພຽນເພື່ອຍົກເອົາໜີ້ສິນໄປຈາກບ້ານຊຶ່ງເອີ່ຍເຖິງໃນບັນດາພວກເຈົ້າ, ເພື່ອວ່າລາວຈະໄດ້ອາໄສຢູ່ທີ່ນັ້ນ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 97

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 2 ເດືອນສິງຫາ, 1833. ການເປີດເຜີຍເທື່ອນີ້ແມ່ນກ່ຽວຂ້ອງໂດຍສະເພາະກັບທຸລະກິດຂອງໄພ່ພົນຂອງພຣະເຈົ້າໃນຊີໂອນ, ເຂດແຈັກສັນ, ລັດມີເຊີຣີ, ເປັນການຕອບທີ່ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບຂໍ້ມູນ. ສະມາຊິກຂອງສາດສະໜາຈັກຢູ່ໃນລັດມີເຊີຣີໃນເວລານັ້ນ ຖືກຂົ່ມເຫັງຢ່າງໜັກ ແລະ, ໃນວັນທີ 23 ເດືອນກໍລະກົດ, 1833, ໄດ້ຖືກບັງຄັບໃຫ້ເຊັນສັນຍາເພື່ອໜີຈາກເຂດແຈັກສັນ.*

*1–2, ໄພ່ພົນຂອງພຣະເຈົ້າຫລາຍຄົນໃນຊີໂອນ (ເຂດແຈັກສັນ, ລັດມີເຊີຣີ) ໄດ້ຮັບພອນສຳລັບຄວາມຊື່ສັດຂອງພວກເຂົາ; 3–5, ພາລີ ພີ ພະແຣັດ ໄດ້ຮັບຄຳຊົມເຊີຍສຳລັບວຽກງານຂອງລາວທີ່ໂຮງຮຽນໃນຊີໂອນ; 6–9, ຄົນທີ່ຍຶດຖືພັນທະສັນຍາຂອງພວກເຂົາໄດ້ຖືກຍອມຮັບໂດຍພຣະຜູ້ເປັນເຈົ້າ; 10–17, ຕ້ອງສ້າງບ້ານຫລັງໜຶ່ງຂຶ້ນໃນຊີໂອນ ຊຶ່ງໃນນັ້ນຜູ້ທີ່ມີໃຈບໍລິສຸດຈະໄດ້ເຫັນພຣະເຈົ້າ; 18–21, ຊີໂອນຄືຜູ້ທີ່ມີໃຈບໍລິສຸດ; 22–28, ຊີໂອນຈະໜີພົ້ນຈາກການຊົງລົງໂທດຂອງພຣະຜູ້ເປັນເຈົ້າ ຖ້າຫາກນາງຊື່ສັດ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າ ເພື່ອນຂອງເຮົາ, ເຮົາກ່າວກັບພວກເຈົ້າດ້ວຍສຽງຂອງເຮົາ, ແມ່ນແຕ່ສຽງຂອງພຣະວິນຍານຂອງເຮົາ, ເພື່ອວ່າເຮົາຈະໄດ້ສະແດງໃຫ້ພວກເຈົ້າເຫັນຄວາມປະສົງຂອງເຮົາກ່ຽວກັບພີ່ນ້ອງຂອງພວກເຈົ້າໃນແຜ່ນດິນ [1a]ຊີໂອນ, ຊຶ່ງຫລາຍຄົນຖ່ອມຕົວແທ້ໆ ແລະ ສະແຫວງຫາຢ່າງພາກພຽນທີ່ຈະຮຽນຮູ້ປັນຍາ ແລະ ຊອກຫາຄວາມຈິງ.

2 ຕາມຄວາມຈິງ, ຕາມຄວາມຈິງແລ້ວເຮົາກ່າວກັບພວກເຈົ້າວ່າ ຄົນເຊັ່ນນັ້ນໄດ້ຮັບພອນແລ້ວ, ເພາະເຮົາ, ພຣະຜູ້ເປັນເຈົ້າ, ສະແດງຄວາມເມດຕາຕໍ່ຄົນທີ່ [2a]ອ່ອນໂຍນ, ແລະ ຕໍ່ຄົນທັງປວງຜູ້ໃດກໍຕາມທີ່ເຮົາປະສົງ, ເພື່ອວ່າເຮົາຈະຖືກຕ້ອງເມື່ອເຮົານຳພວກເຂົາມາສູ່ການພິພາກສາ.

3 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າ, ກ່ຽວກັບ [3a]ໂຮງຮຽນໃນຊີໂອນ, ເຮົາ, ພຣະຜູ້

**97** 1*a* ຄມພ ຊີໂອນ.
2*a* ມທ 5:5; ມຊຢ 3:19.
3*a* ຄມພ ໂຮງຮຽນຂອງສາດສະດາ.

ເປັນເຈົ້າ, ພໍໃຈຫລາຍທີ່ຈະມີໂຮງຮຽນໃນ
ຊີໂອນ, ແລະ ກັບຜູ້ຮັບໃຊ້ຂອງເຮົາ [ຂ]ພາລີ
ພີ ພະແຣັດ ນຳອີກ, ເພາະລາວຄົງຢູ່ໃນເຮົາ.
4 ແລະ ຕາບໃດທີ່ລາວຍັງສືບຕໍ່ແນບສະ
ໜິດຢູ່ໃນເຮົາ ລາວຈະສືບຕໍ່ເປັນຜູ້ຄວບ
ຄຸມໂຮງຮຽນໃນແຜ່ນດິນຊີໂອນ ຈົນກວ່າ
ເຮົາຈະມອບບັນຍັດອື່ນໆໃຫ້ແກ່ລາວ.
5 ແລະ ເຮົາຈະອວຍພອນລາວດ້ວຍ
ພອນຢ່າງຫລວງຫລາຍ, ໃນການອະທິ
ບາຍພຣະຄຳພີ ແລະ ຄວາມລຶກລັບທັງ
ໝົດເພື່ອການອົບຮົມຂອງໂຮງຮຽນ, ແລະ
ຂອງສາດສະໜາຈັກໃນຊີໂອນ.
6 ແລະ ກັບຜູ້ທີ່ເຫລືອຢູ່ຂອງໂຮງຮຽນ,
ເຮົາ, ພຣະຜູ້ເປັນເຈົ້າ, ເຕັມໃຈທີ່ຈະ
ສະແດງຄວາມເມດຕາ; ເຖິງຢ່າງໃດກໍ
ຕາມ, ມີບາງຄົນທີ່ຕ້ອງຖືກ [ກ]ຕີສອນ,
ແລະ ວຽກງານຂອງພວກເຂົາຈະຖືກເຮັດ
ໃຫ້ເປັນທີ່ຮູ້ຈັກ.
7 [ກ]ຂວານຖືກວາງໄວ້ແລ້ວຢູ່ທີ່ຮາກຂອງ
ຕົ້ນໄມ້; ແລະ ຕົ້ນໄມ້ທຸກຕົ້ນທີ່ບໍ່ອອກ [ຂ]ຜົນ
ດີຈະຖືກໂຄ່ນລົງ ແລະ ໂຍນເຂົ້າກອງໄຟ.
ເຮົາພຣະຜູ້ເປັນເຈົ້າ ກ່າວມັນໄວ້ດັ່ງນີ້.
8 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າວ່າ ທຸກຄົນໃນບັນດາພວກເຂົາທີ່ຮູ້
ວ່າ [ກ]ຫົວໃຈຂອງພວກເຂົາ [ຂ]ຊື່ສັດ, ແລະ
ຊອກຊ້ຳ, ແລະ ວິນຍານຂອງພວກເຂົາສຳ
ນຶກຜິດ, ແລະ [ຄ]ເຕັມໃຈທີ່ຈະຍຶດຖືພັນທະ
ສັນຍາຂອງພວກເຂົາໂດຍ [ງ]ການເສຍສະ
ລະ—ແທ້ຈິງແລ້ວ, ການເສຍສະລະທຸກ
ຢ່າງຊຶ່ງເຮົາ, ພຣະຜູ້ເປັນເຈົ້າ, ຈະບັນຊາ—
ພວກເຂົາໄດ້ຮັບ [ຈ]ການຍອມຮັບຈາກເຮົາ.
9 ເພາະເຮົາ, ພຣະຜູ້ເປັນເຈົ້າ, ຈະເຮັດ
ໃຫ້ພວກເຂົານຳຜົນອອກມາດັ່ງຕົ້ນໄມ້ທີ່
ອອກຜົນຫລາຍ ຊຶ່ງຖືກປູກໄວ້ຢູ່ໃນດິນດີ,
ແຄມຮ່ອງນ້ຳບໍລິສຸດ, ຊຶ່ງອອກຜົນອັນມີຄ່າ
ຢ່າງຫລວງຫລາຍ.
10 ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ມັນເປັນຄວາມປະສົງຂອງ
ເຮົາທີ່ຈະມີການສ້າງ [ກ]ບ້ານຫລັງໜຶ່ງໃຫ້
ແກ່ເຮົາໃນແຜ່ນດິນຊີໂອນ, ຕາມ [ຂ]ແບບ
ແຜນທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າ.
11 ແທ້ຈິງແລ້ວ, ໃຫ້ສ້າງມັນຢ່າງໄວ,
ໂດຍການຈ່າຍສ່ວນສິບຂອງຜູ້ຄົນຂອງ
ເຮົາ.
12 ຈົ່ງເບິ່ງ, ນີ້ຄື [ກ]ສ່ວນສິບ ແລະ ການ
ເສຍສະລະຊຶ່ງເຮົາ, ພຣະຜູ້ເປັນເຈົ້າ, ຮຽກ
ຮ້ອງຈາກມືຂອງພວກເຂົາ, ເພື່ອວ່າ [ຂ]ບ້ານ
ຫລັງໜຶ່ງຈະຖືກສ້າງໄວ້ໃຫ້ເຮົາສຳລັບ
ຄວາມລອດຂອງຊີໂອນ—
13 ເພື່ອເປັນບ່ອນ [ກ]ຂອບພຣະໄທ ສຳ
ລັບໄພ່ພົນທັງຫລາຍຂອງພຣະເຈົ້າ, ແລະ
ເພື່ອເປັນບ່ອນໃຫ້ການແນະນຳສຳລັບທຸກ
ຄົນເຫລົ່ານັ້ນ ຜູ້ທີ່ຖືກເອີ້ນໃຫ້ເຮັດວຽກງານ
ແຫ່ງການປະຕິບັດສາດສະໜາກິດໃນການ
ເອີ້ນ ແລະ ໜ້າທີ່ຫລາຍຢ່າງຂອງພວກ
ເຂົາ;
14 ເພື່ອວ່າພວກເຂົາຈະຖືກເຮັດໃຫ້ດີ
ພ້ອມໃນ [ກ]ຄວາມເຂົ້າໃຈ ເລື່ອງການປະຕິ

---

3 *ຂ* ຄມພ ພະແຣັດ, ພາລີ ພາກເກີ.
6 *ກ* ຄມພ ຕີສອນ, ການຕີສອນ.
7 *ກ* ມທ 3:10.
*ຂ* ລກ 6:43–45; ແອວ 5:36, 52; 3 ນຟ 14:15–20.
8 *ກ* ຄມພ ຫົວໃຈທີ່ຊອກຊ້ຳ.
*ຂ* ຄມພ ຊື່ສັດ, ຄວາມຊື່ສັດ.
*ຄ* ຄພ 64:34.
*ງ* ຄມພ ເສຍສະລະ, ການເສຍສະລະ.
*ຈ* ຄພ 52:15; 132:50.
10 *ກ* ຄພ 57:3; 88:119; 124:51.
*ຂ* ຄພ 115:14–16.
12 *ກ* ຄມພ ສ່ວນສິບ, ເງິນສ່ວນສິບ.
*ຂ* ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
13 *ກ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
14 *ກ* ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.

ບັດສາດສະໜາກິດຂອງພວກເຂົາ, ໃນທິດ
ສະດີ, ໃນຫລັກທຳ, ແລະ ໃນຄຳສອນ, ໃນ
ທຸກສິ່ງທັງປວງກ່ຽວກັບ *ຂ*ອານາຈັກຂອງ
ພຣະເຈົ້າ ເທິງແຜ່ນດິນໂລກ, *ຄ*ຂໍກະແຈອາ
ນາຈັກຊຶ່ງໄດ້ມອບໃຫ້ແກ່ພວກເຈົ້າ.
15 ແລະ ຕາບ ໃດ ທີ່ຜູ້ຄົນຂອງເຮົາໄດ້
ສ້າງບ້ານຫລັງໜຶ່ງ ໃຫ້ແກ່ເຮົາໃນພຣະ
ນາມຂອງພຣະຜູ້ເປັນເຈົ້າ, ແລະ ບໍ່ຍອມ
ໃຫ້ *ກ*ສິ່ງໜຶ່ງສິ່ງໃດທີ່ບໍ່ສະອາດເຂົ້າໄປໃນ
ນັ້ນ, ເພື່ອເຮັດໃຫ້ມັນໝົ່ນໝອງ, ແລ້ວ *ຂ*ລັດ
ສະໝີພາບຂອງເຮົາຈະຢູ່ເທິງບ້ານຫລັງ
ນັ້ນ;
16 ແທ້ຈິງແລ້ວ, ແລະ ເຮົາຈະ *ກ*ສະຖິດ
ຢູ່ໃນນັ້ນ, ເພາະເຮົາຈະມາຫາມັນ, ແລະ ຜູ້
ທີ່ມີໃຈ *ຂ*ບໍລິສຸດທີ່ມາຫາມັນ ຈະເຫັນພຣະ
ເຈົ້າ.
17 ແຕ່ຖ້າ ຫາກ ບ້ານ ຫລັງ ນີ້ ໝົ່ນ ໝອງ
ເຮົາຈະບໍ່ເຂົ້າໄປ ໃນນັ້ນ, ແລະ ລັດສະໝີ
ພາບຂອງເຮົາຈະບໍ່ຢູ່ໃນນັ້ນ; ເພາະເຮົາຈະ
ບໍ່ເຂົ້າໄປໃນພຣະວິຫານທີ່ບໍ່ບໍລິສຸດ.
18 ແລະ, ບັດນີ້, ຈົ່ງເບິ່ງ, ຖ້າຫາກຊີໂອນ
ເຮັດສິ່ງເຫລົ່ານີ້ ແລ້ວນາງຈະ *ກ*ຈະເລີນ
ກ້າວໜ້າ, ແລະ ຕົວນາງເອງຈະແຜ່ຂະ
ຫຍາຍອອກໄປ ແລະ ຮຸ່ງເຫລື້ອມ, ຍິ່ງ
ໃຫຍ່, ແລະ ເປັນໜ້າຢ້ານກົວຫລາຍ.
19 ແລະ *ກ*ປະຊາຊາດທັງປວງຂອງແຜ່ນ
ດິນໂລກຈະຍົກຍ້ອງນາງ, ແລະ ຈະກ່າວ
ວ່າ: *ຂ*ຊີໂອນເປັນເມືອງຂອງພຣະເຈົ້າຂອງ
ເຮົາແທ້ໆ, ແລະ ແນ່ນອນວ່າຊີໂອນຈະບໍ່
ຖືກໂຄ່ນລົ້ມ, ທັງຈະບໍ່ຖືກຍ້າຍອອກຈາກ
ບ່ອນຂອງນາງ, ເພາະພຣະເຈົ້າສະຖິດຢູ່
ທີ່ນັ້ນ, ແລະ ພຣະຫັດພຣະຜູ້ເປັນເຈົ້າຢູ່ທີ່
ນັ້ນ;
20 ແລະ ພຣະ ອົງ ໄດ້ ສາບານ ໂດຍ
ອຳນາດແຫ່ງລິດເດດຂອງພຣະອົງ ທີ່ຈະ
ເປັນຄວາມລອດຂອງນາງ ແລະ ເປັນ *ກ*ຫໍ
ຍາມຂອງນາງ.
21 ສະນັ້ນ, ຕາມຄວາມຈິງແລ້ວ ພຣະຜູ້
ເປັນເຈົ້າໄດ້ກ່າວດັ່ງນີ້, ໃຫ້ຊີໂອນປິຕິຍິນ
ດີເຖີດ, ເພາະນີ້ຄື *ກ*ຊີໂອນ—ຜູ້ທີ່ມີໃຈບໍລິ
ສຸດ; ສະນັ້ນ, ໃຫ້ຊີໂອນປິຕິຍິນດີເຖີດ, ໃນ
ຂະນະທີ່ຄົນຊົ່ວທັງປວງໂສກເສົ້າ.
22 ເພາະຈົ່ງເບິ່ງ, ແລະ ເບິ່ງແມ, *ກ*ການ
ແກ້ແຄ້ນມາຢ່າງໄວເທິງຄົນອະທຳຄືດັ່ງລົມ
ບ້າໝູ; ແລະ ໃຜຈະໜີພົ້ນຈາກມັນ?
23 *ກ*ການຂ້ຽນຕີຂອງພຣະຜູ້ເປັນເຈົ້າຈະ
ຜ່ານໄປໃນເວລາກາງຄືນ ແລະ ໃນເວລາ
ກາງເວັນ, ແລະ ການລາຍງານຂອງມັນຈະ
ລົບກວນຜູ້ຄົນທັງປວງ; ແທ້ຈິງແລ້ວ, ມັນ
ຈະບໍ່ຖືກຢຸດຢັ້ງໄວ້ຈົນກວ່າພຣະຜູ້ເປັນເຈົ້າ
ສະເດັດມາ;
24 ເພາະ ຄວາມ ເຄືອງ ແຄ້ນ ຂອງ ພຣະ
ຜູ້ເປັນເຈົ້າເກີດຂຶ້ນກັບຄວາມໜ້າກຽດຊັງ
ຂອງພວກເຂົາ ແລະ ວຽກງານຊົ່ວຮ້າຍທັງ
ໝົດຂອງພວກເຂົາ.
25 ເຖິງ ຢ່າງ ໃດ ກໍ ຕາມ, ຊີໂອນ ຈະ

14 *ຂ* ຄມພ ອານາຈັກຂອງ ພຣະເຈົ້າ ຫລື ອາ ນາຈັກສະຫວັນ.
*ຄ* ຄມພ ຂໍກະແຈຂອງ ຖານະປະໂລຫິດ.
15 *ກ* ຄພ 94:9; 109:20–21.
*ຂ* ຮກ 2:7; ຄພ 84:5.
16 *ກ* ຄພ 110:1–10.
*ຂ* ມທ 5:8; ຄພ 67:10–13; 88:68. ຄມພ ບໍລິສຸດ, ຜູ້ບໍລິ ສຸດ, ຄວາມບໍລິສຸດ.
18 *ກ* ຄພ 90:24; 100:15.
19 *ກ* ອຊຢ 60:14; ຊກຢ 2:10–12; ຄພ 45:66–70; 49:10.
*ຂ* ຄມພ ເຢຣູຊາເລັມໃໝ່.
20 *ກ* 2 ຊມອ 22:3.
21 *ກ* ມຊ 7:18. ຄມພ ຊີໂອນ; ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
22 *ກ* ຄມພ ແກ້ແຄ້ນ, ການແກ້ແຄ້ນ.
23 *ກ* ອຊຢ 28:14–19; ຄພ 45:31.

[ກ]ຫລົບໜີ ຖ້າຫາກນາງຍຶດຖືທີ່ຈະປະຕິບັດ
ຕາມທຸກສິ່ງທັງປວງອັນໃດກໍຕາມທີ່ເຮົາໄດ້
ບັນຊານາງ.
26 ແຕ່ຖ້າຫາກນາງບໍ່ຍຶດຖືທີ່ຈະປະຕິ
ບັດຕາມສິ່ງໃດກໍຕາມທີ່ເຮົາໄດ້ບັນຊານາງ,
ແລ້ວເຮົາຈະມາ [ກ]ຢ້ຽມຢາມນາງ ອີງຕາມ
ວຽກງານທັງໝົດຂອງນາງ, ດ້ວຍຄວາມ
ທຸກທໍລະມານອັນແສນສາຫັດ, ດ້ວຍ [ຂ]ພະ
ຍາດໂລຄາຕ່າງໆ, ດ້ວຍ ໂຣກລະບາດ,
ດ້ວຍດາບ, ດ້ວຍ [ຄ]ການແກ້ແຄ້ນ, [ງ]ດ້ວຍ
ໄຟທີ່ເຜົາຜານ.
27 ເຖິງຢ່າງໃດກໍຕາມ, ໃຫ້ອ່ານມັນເຂົ້າ
ຫູນາງເທື່ອນີ້ເທື່ອດຽວ, ວ່າເຮົາ, ພຣະຜູ້
ເປັນເຈົ້າ, ໄດ້ຮັບເອົາເຄື່ອງຖວາຍຂອງ
ນາງແລ້ວ; ແລະ ຖ້າຫາກນາງບໍ່ເຮັດບາບ
ອີກຕໍ່ໄປ ແລ້ວ [ກ]ສິ່ງເຫລົ່ານີ້ຈະບໍ່ເກີດກັບ
ນາງເລີຍ;
28 ແລະ ເຮົາຈະ [ກ]ອວຍພອນນາງດ້ວຍ
ພອນຕ່າງໆ, ແລະ ທະວີຄູນດ້ວຍພອນ
ຢ່າງຫລວງຫລາຍໃຫ້ແກ່ນາງ, ແລະ ໃຫ້
ແກ່ຄົນລຸ້ນຫລັງຂອງນາງຕະຫລອດການ
ແລະ ຕະຫລອດໄປ, ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຈົ້າ ໄດ້ກ່າວ.
ອາແມນ.

## ພາກທີ 98

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 6 ເດືອນສິງຫາ, 1833. ການເປີດເຜີຍນີ້ມາເຖິງເນື່ອງຈາກການຂົ່ມເຫັງທີ່ເກີດກັບໄພ່ພົນຂອງພຣະເຈົ້າໃນລັດມີເຊີຣີ. ການທີ່ສະມາຊິກຂອງສາດສະໜາຈັກ ໄດ້ມາຕັ້ງຖິ່ນຖານຫລາຍຂຶ້ນ ຢູ່ໃນລັດມີເຊີຣີ ຈຶ່ງໄດ້ສ້າງບັນຫາໃຫ້ຜູ້ມາຕັ້ງຖິ່ນຖານຄົນອື່ນໆ, ຜູ້ຮູ້ສຶກຢ້ານກົວຕໍ່ຈຳນວນຂອງໄພ່ພົນຂອງພຣະເຈົ້າ, ຕໍ່ອິດທິພົນຝ່າຍການເມືອງ ແລະ ເສດຖະກິດ, ແລະ ວັດທະນະທຳ ແລະ ສາດສະໜາ ທີ່ແຕກຕ່າງກັນ. ໃນເດືອນກໍລະກົດ 1833, ກຸ່ມອັນຕະພານໄດ້ທຳລາຍຊັບສິນຂອງສາດສະໜາຈັກ, ໄດ້ເອົາຢາງໝາກຕອຍທາໃສ່ ແລະ ເອົາຂົນໄກ່ພຶກໃສ່ສະມາຊິກສອງຄົນຂອງສາດສະໜາຈັກ, ແລະ ສັ່ງໃຫ້ໄພ່ພົນຂອງພຣະເຈົ້າ ໜີຈາກເຂດແຈັກສັນ. ເຖິງແມ່ນວ່າຂ່າວບາງຢ່າງກ່ຽວກັບບັນຫາໃນລັດມີເຊີຣີໄດ້ໄປເຖິງຜູ້ເປັນສາດສະດາໃນເມືອງເຄີດແລນຢ່າງບໍ່ມີຂໍ້ສົງໄສ (ຫ່າງໄກ ເກົ້າຮ້ອຍໄມ [1,448 ກິໂລແມັດ]), ແຕ່ຄວາມຮ້າຍແຮງຂອງສະຖານະການໄດ້ຖືກເຮັດໃຫ້ເພິ່ນຮູ້ໃນມື້ນີ້ພຽງແຕ່ໂດຍການເປີດເຜີຍເທົ່ານັ້ນ.*

*1–3, ຄວາມທຸກທໍລະມານຂອງໄພ່ພົນຂອງພຣະເຈົ້າຈະເປັນໄປເພື່ອຄວາມດີຂອງພວກເຂົາ; 4–8, ໄພ່ພົນຂອງພຣະເຈົ້າຕ້ອງນັບຖືກົດລັດຖະທຳມະນູນຂອງແຜ່ນດິນ; 9–10, ຄົນທີ່ຊື່ສັດ, ສະຫລາດ, ແລະ ດີ ຄວນຖືກສະໜັບສະໜູນໃຫ້ປົກຄອງເລື່ອງທາງໂລກ; 11–15, ຄົນທີ່ມອບຊີວິດຂອງຕົນໃນອຸດົມການຂອງພຣະຜູ້*

25 *ກ* 2 ນຟ 6:13–18;
ຄພ 63:34;
ຈສ—ມ 1:20.
26 *ກ* ຄພ 84:54–59.
*ຂ* ລກ 21:10–13.
*ຄ* ມລກ 4:1–3;
3 ນຟ 21:20–21.
*ງ* ຢອ 1:15–20.
27 *ກ* ອຊກ 18:27.
28 *ກ* ຄມພ ພອນ, ໃຫ້
ພອນ, ເປັນພອນ.

*ເປັນ ເຈົ້າ ຈະມີຊີວິດນິລັນດອນ; 16–18, ເລີກເຮັດສົງຄາມ ແລະ ປະກາດສັນຕິສຸກ; 19–22, ໄພ່ພົນຂອງພຣະເຈົ້າ ໃນ ເມືອງ ເຄີດແລນໄດ້ຖືກຕຳນິ ແລະ ຖືກບັນຊາໃຫ້ກັບໃຈ; 23–32, ພຣະຜູ້ເປັນເຈົ້າ ເປີດເຜີຍ ກົດຂອງພຣະອົງທີ່ຄວບຄຸມການຂົ່ມເຫັງ ແລະ ຄວາມທຸກທໍລະມານກັບຜູ້ຄົນຂອງ ພຣະອົງ; 33–38, ສົງຄາມເປັນສິ່ງທີ່ຖືກ ຕ້ອງເມື່ອພຣະຜູ້ເປັນເຈົ້າບັນຊາເທົ່ານັ້ນ; 39–48, ໄພ່ພົນຂອງພຣະເຈົ້າຕ້ອງໃຫ້ອະ ໄພແກ່ສັດຕູຂອງພວກເຂົາ, ຜູ້ຊຶ່ງຖ້າຫາກ ພວກເຂົາກັບໃຈ ຈະພົ້ນຈາກການແກ້ ແຄ້ນຂອງພຣະຜູ້ເປັນເຈົ້າຄືກັນ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າ ເພື່ອນຂອງເຮົາ, [ກ]ຢ່າສູ່ຢ້ານ, ຈົ່ງສະ
ບາຍໃຈເຖີດ; ແທ້ຈິງແລ້ວ, ຈົ່ງປິຕິຍິນດີ
ຕະຫລອດໄປ, ແລະ ຖວາຍ [ຂ]ຄວາມຂອບ
ພຣະຄຸນໃນທຸກສິ່ງ;
2 ຈົ່ງ [ກ]ລໍຖ້າພຣະຜູ້ເປັນເຈົ້າຢ່າງອົດທົນ,
ເພາະຄຳອະທິຖານຂອງພວກເຈົ້າໄດ້ເຂົ້າ
ພຣະກັນຂອງພຣະຜູ້ເປັນເຈົ້າແຫ່ງຊາບາ
ໂອດແລ້ວ, ແລະ ໄດ້ຖືກບັນທຶກໄວ້ດ້ວຍ
ຕາປະທັບ ແລະ ຫລັກຖານ—ພຣະຜູ້ເປັນ
ເຈົ້າໄດ້ສາບານ ແລະ ອອກຄຳສັ່ງວ່າມັນ
ຈະຖືກປະທານໃຫ້ຕາມທີ່ທູນຂໍ.
3 ສະນັ້ນ, ພຣະອົງຈຶ່ງມອບຄຳສັນຍາ
ນີ້ໃຫ້ແກ່ພວກເຈົ້າ, ດ້ວຍພັນທະສັນຍາທີ່
ຖາວອນ ວ່າມັນຈະສຳເລັດຄົບຖ້ວນ; ແລະ
ທຸກສິ່ງທັງປວງໃນນັ້ນທີ່ພວກເຈົ້າໄດ້ຮັບ
[ກ]ທຸກທໍລະມານມາ ຈະທຳງານນຳກັນເພື່ອ
ຄວາມດີຂອງພວກເຈົ້າ, ແລະ ຕໍ່ລັດສະໝີ
ພາບຂອງນາມຂອງເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ.
4 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າກ່ຽວກັບກົດໝາຍຂອງ
ແຜ່ນດິນ, ມັນເປັນຄວາມປະສົງຂອງເຮົາ
ທີ່ຜູ້ຄົນຂອງເຮົາຈະຍຶດຖືທີ່ຈະປະຕິບັດທຸກ
ສິ່ງທັງປວງ ບໍ່ວ່າອັນໃດກໍຕາມທີ່ເຮົາບັນ
ຊາພວກເຂົາ.
5 ແລະ ວ່າ [ກ]ກົດຂອງແຜ່ນດິນຊຶ່ງເປັນ
ກົດ [ຂ]ລັດຖະທຳມະນູນ, ອັນທີ່ສະໜັບສະ
ໜູນຫລັກທຳແຫ່ງອິດສະລະພາບຂໍ້ນັ້ນໃນ
ການຮັກສາສິດ ແລະ ສິດທິພິເສດ, ເປັນ
ຂອງມະນຸດຊາດທັງປວງ, ແລະ ເປັນສິ່ງ
ຖືກຕ້ອງຢູ່ຕໍ່ໜ້າເຮົາ.
6 ສະນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ຈຶ່ງຮັບ
ຮອງພວກເຈົ້າ, ແລະ ພີ່ນ້ອງຂອງພວກເຈົ້າ
ຈາກສາດສະໜາຈັກຂອງເຮົາ, ໃນການນັບ
ຖືກົດນັ້ນຊຶ່ງເປັນກົດລັດຖະທຳມະນູນຂອງ
ແຜ່ນດິນ;
7 ແລະ ກ່ຽວກັບກົດຂອງມະນຸດ, ບໍ່ວ່າສິ່ງ
ໃດກໍຕາມທີ່ຫລາຍ ຫລື ໜ້ອຍໄປກວ່ານັ້ນ,
ມາຈາກຄວາມຊົ່ວ.
8 ເຮົາ, ອົງພຣະຜູ້ເປັນເຈົ້າ, ເຮັດໃຫ້
ພວກເຈົ້າເປັນ [ກ]ອິດສະລະ, ສະນັ້ນ ພວກ
ເຈົ້າຈຶ່ງເປັນອິດສະລະແທ້ໆ; ແລະ ກົດເຮັດ
ໃຫ້ພວກເຈົ້າເປັນອິດສະລະຄືກັນ.
9 ເຖິງຢ່າງໃດກໍຕາມ, ເມື່ອ [ກ]ຄົນຊົ່ວປົກ
ຄອງ ຜູ້ຄົນຈະໂສກເສົ້າ.

**98** 1*ກ* ຄພ 68:6.
*ຂ* ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
2*ກ* ພສສ 27:14; ອຊຢ 30:18–19; ຄພ 133:45.
3*ກ* ຄພ 122:7. ຄມພ ຍາກລຳບາກ, ຄວາມຍາກລຳບາກ.
5*ກ* 1 ປຕ 2:13–14; ຄພ 58:21; 134:5.
*ຂ* ຄພ 101:77–80; 109:54. ຄມພ ເສລີພາບ; ລັດຖະທຳມະນູນ.
8*ກ* ຢຮ 8:32; 2 ກຣທ 3:17. ຄມພ ອິດສະລະ, ອິດສະລະພາບ; ອຳເພີໃຈ.
9*ກ* ສພສ 29:2.

10 ດັ່ງນັ້ນ, ຄວນສະແຫວງຫາຄົນທີ່ [ກ]ຊື່
ສັດ ແລະ ສະຫລາດຢ່າງພາກພຽນ, ແລະ
ພວກເຈົ້າຄວນຍຶດຖືທີ່ຈະສະໜັບສະໜູນ
ຄົນດີ ແລະ ສະຫລາດ; ຖ້າບໍ່ດັ່ງນັ້ນ ສິ່ງ
ໃດກໍຕາມທີ່ໜ້ອຍກວ່ານັ້ນແມ່ນມາຈາກ
ຄວາມຊົ່ວ.
11 ແລະ ເຮົາມອບບັນຍັດຂໍ້ໜຶ່ງໃຫ້ແກ່
ພວກເຈົ້າ, ວ່າພວກເຈົ້າປະຖິ້ມຄວາມຊົ່ວ
ທັງໝົດ ແລະ ແນບສະໜິດຢູ່ກັບຄວາມດີ
ທັງໝົດ, ເພື່ອວ່າພວກເຈົ້າຈະດຳລົງຊີວິດ
ຕາມທຸກ [ກ]ຄຳຊຶ່ງອອກມາຈາກພຣະໂອດ
ຂອງພຣະເຈົ້າ.
12 ເພາະ ພຣະ ອົງ ຈະ [ກ]ປະທານ ໃຫ້
ແກ່ຄົນຊື່ສັດເປັນບັນທັດ, ເປັນຂໍ້ເລັກໆ
ໜ້ອຍໆ; ແລະ ເຮົາຈະ [ຂ]ທົດລອງພວກເຈົ້າ
ແລະ ພິສູດພວກເຈົ້າໂດຍວິທີນີ້.
13 ແລະ ຜູ້ໃດກໍຕາມທີ່ [ກ]ວາງຊີວິດຂອງ
ເຂົາໃນອຸດົມການຂອງເຮົາ, ເພື່ອເຫັນແກ່
ນາມຂອງເຮົາ, ຈະພົບມັນອີກ, ແມ່ນແຕ່ຊີ
ວິດນິລັນດອນ.
14 ສະນັ້ນ, ຢ່າສູ່ [ກ]ຢ້ານສັດຕູຂອງພວກ
ເຈົ້າ, ເພາະເຮົາໄດ້ອອກຄຳສັ່ງຢູ່ໃນໃຈ
ຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ, ວ່າ
ເຮົາຈະ [ຂ]ພິສູດພວກເຈົ້າໃນທຸກສິ່ງທັງ
ປວງ, ວ່າພວກເຈົ້າຈະຢູ່ໃນພັນທະສັນຍາ
ຂອງເຮົາຫລືບໍ່, ແມ່ນແຕ່ຈົນເຖິງ [ຄ]ຄວາມ
ຕາຍ, ເພື່ອວ່າພວກເຈົ້າຈະຖືກພົບວ່າມີ
ຄ່າຄວນ.
15 ເພາະຖ້າຫາກພວກເຈົ້າຈະບໍ່ຢູ່ໃນ
ພັນທະສັນຍາຂອງເຮົາ ແລ້ວພວກເຈົ້າກໍບໍ່
ມີຄຸນຄ່າກັບເຮົາ.
16 ສະນັ້ນ, ຈົ່ງ [ກ]ເລີກ ເຮັດ [ຂ]ສົງຄາມ
ແລະ ປະກາດ [ຄ]ສັນຕິສຸກ, ແລະ ສະແຫວງ
ຫາຢ່າງພາກພຽນທີ່ຈະ [ງ]ຫັນໃຈພໍ່ມາຫາ
ລູກ, ແລະ ຫັນໃຈລູກໄປຫາພໍ່;
17 ແລະ ອີກ ເທື່ອໜຶ່ງ, ຫັນ ໃຈ ຂອງ
[ກ]ຊາວຢິວໄປຫາສາດສະດາ, ແລະ ສາດ
ສະດາໄປຫາຊາວຢິວ; ຖ້າບໍ່ດັ່ງນັ້ນເຮົາຈະ
ມາ ແລະ ທຳລາຍແຜ່ນດິນໂລກດ້ວຍຄຳ
ສາບແຊ່ງ, ແລະ ເນື້ອໜັງທັງປວງຈະຖືກ
ເຜົາໄໝ້ຢູ່ຕໍ່ໜ້າເຮົາ.
18 ຢ່າກັງວົນໃຈເລີຍ; ເພາະໃນບ້ານ
ຂອງພຣະບິດາຂອງເຮົາມີ [ກ]ຜາສາດຢ່າງ
ຫລວງຫລາຍ, ແລະ ເຮົາໄດ້ຈັດຕຽມບ່ອນ
ໄວ້ສຳລັບພວກເຈົ້າແລ້ວ; ແລະ ພຣະບິດາ
ຂອງເຮົາ ແລະ ເຮົາຢູ່ທີ່ໃດ ພວກເຈົ້າກໍຈະ
ຢູ່ທີ່ນັ້ນຄືກັນ.
19 ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ພໍ
ໃຈຫລາຍກັບຫລາຍຄົນຢູ່ໃນສາດສະໜາ
ຈັກທີ່ເມືອງເຄີດແລນ;
20 ເພາະພວກເຂົາບໍ່ປະຖິ້ມບາບຂອງ
ພວກເຂົາ, ແລະ ທາງເດີນທີ່ຊົ່ວຮ້າຍຂອງ
ພວກເຂົາ, ຄວາມທະນົງຕົວຂອງໃຈຂອງ
ພວກເຂົາ, ແລະ ຄວາມໂລບຂອງພວກ
ເຂົາ, ແລະ ສິ່ງທີ່ໜ້າລັງກຽດທັງໝົດຂອງ
ພວກເຂົາ, ແລະ ຍຶດຖືຖ້ອຍຄຳແຫ່ງປັນຍາ

10 *ກ* ຄມພ ຊື່ສັດ, ຄວາມຊື່ສັດ.
11 *ກ* ພບຍ 8:3; ມທ 4:4; ຄພ 84:43–44.
12 *ກ* ອຊຢ 28:10; ຄພ 42:61.
*ຂ* ອຣຮ 3:25–26.
13 *ກ* ລກ 9:24; ຄພ 101:35–38; 103:27–28.
ຄມພ ຕາຍເພາະ ຄວາມເຊື່ອ, ການຕາຍ ເພາະຄວາມເຊື່ອ.
14 *ກ* ນມຢ 4:14; ຄພ 122:9.
*ຂ* ຄພ 124:55.
*ຄ* ພນມ 2:10; ຄພ 136:31, 39.
16 *ກ* ແອວ 48:14.
ຄມພ ຄົນທີ່ສ້າງ ຄວາມສະຫງົບສຸກ.
*ຂ* ຄມພ ສົງຄາມ.
*ຄ* ຄມພ ສະຫງົບ, ຄວາມສະຫງົບ.
*ງ* ມລກ 4:5–6; ຄພ 2:1–2.
17 *ກ* ຄມພ ຊາວຢິວ.
18 *ກ* ຢຮ 14:2; ຄພ 59:2; 76:111; 81:6.

ແລະ ຊີວິດນິລັນດອນ ຊຶ່ງເຮົາໄດ້ມອບໃຫ້
ແກ່ພວກເຂົາ.
21 ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ກັບ
ພວກເຈົ້າວ່າ, ເຮົາ, ພຣະຜູ້ເປັນເຈົ້າ, ຈະ
[ກ]ຕີສອນພວກເຂົາ ແລະ ຈະເຮັດສິ່ງໃດກໍ
ຕາມທີ່ເຮົາຕ້ອງການ, ຖ້າຫາກພວກເຂົາບໍ່
ກັບໃຈ ແລະ ຍຶດຖືທຸກສິ່ງທັງປວງ ອັນໃດ
ກໍຕາມທີ່ເຮົາໄດ້ກ່າວກັບພວກເຂົາ.
22 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າວ່າ ຖ້າຫາກພວກເຈົ້າຍຶດຖືທີ່ຈະ [ກ]ເຮັດ
ສິ່ງໃດກໍຕາມທີ່ເຮົາບັນຊາພວກເຈົ້າ, ແລ້ວ
ເຮົາ, ພຣະຜູ້ເປັນເຈົ້າ, ຈະຫັນເອົາພຣະພິ
ໂລດ ແລະ ຄວາມເຄືອງແຄ້ນທັງໝົດໄປ
ຈາກພວກເຈົ້າ, ແລະ [ຂ]ປະຕູນະລົກຈະເອົາ
ຊະນະພວກເຈົ້າບໍ່ໄດ້.
23 ບັດນີ້, ເຮົາກ່າວກັບພວກເຈົ້າກ່ຽວກັບ
ຄອບຄົວຂອງພວກເຈົ້າ—ຖ້າຫາກມະນຸດ
ຈະ [ກ]ທຳຮ້າຍພວກເຈົ້າ, ຫລື ຄອບຄົວຂອງ
ພວກເຈົ້າ, ເທື່ອໜຶ່ງ, ແລະ ພວກເຈົ້າທົນ
ກັບມັນດ້ວຍຄວາມອົດທົນ ແລະ ບໍ່ໝິ່ນປະ
ໝາດພວກເຂົາ, ທັງບໍ່ພະຍາຍາມແກ້ແຄ້ນ
ພວກເຂົາ, ແລ້ວພວກເຈົ້າຈະໄດ້ຮັບລາງ
ວັນ;
24 ແຕ່ຖ້າຫາກພວກເຈົ້າບໍ່ທົນກັບມັນ
ດ້ວຍຄວາມອົດທົນ, ພວກເຈົ້າຈະຖືກພິຈາ
ລະນາວ່າ ການ [ກ]ວັດແທກນັ້ນແມ່ນທ່ຽງທຳ
ກັບພວກເຈົ້າ.
25 ແລະ ອີກເທື່ອໜຶ່ງ, ຖ້າຫາກສັດຕູ
ຂອງພວກເຈົ້າຈະທຳຮ້າຍພວກເຈົ້າເປັນ
ເທື່ອທີສອງ, ແລະ ພວກເຈົ້າບໍ່ໄດ້ໝິ່ນປະ
ໝາດສັດຕູຂອງພວກເຈົ້າ, ແລະ ທົນກັບ
ມັນດ້ວຍຄວາມອົດທົນ, ແລ້ວລາງວັນຂອງ
ພວກເຈົ້າຈະເປັນຮ້ອຍເທົ່າ.
26 ແລະ ອີກເທື່ອໜຶ່ງ, ຖ້າຫາກເຂົາທຳ
ຮ້າຍພວກເຈົ້າເປັນເທື່ອທີສາມ, ແລະ ພວກ
ເຈົ້າທົນກັບມັນດ້ວຍ [ກ]ຄວາມອົດທົນ, ແລ້ວ
ລາງວັນຂອງພວກເຈົ້າຈະທະວີຄູນສີ່ເທົ່າ;
27 ແລະ ປະຈັກພະຍານສາມຄັ້ງນີ້ ຈະ
ຢືນຟ້ອງສັດຕູຂອງພວກເຈົ້າ ຖ້າຫາກເຂົາ
ບໍ່ກັບໃຈ, ແລະ ຈະບໍ່ຖືກລົບລ້າງໄປ.
28 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ຖ້າຫາກສັດຕູຄົນ
ນັ້ນຈະໜີພົ້ນຈາກການແກ້ແຄ້ນຂອງເຮົາ,
ໂດຍທີ່ເຂົາບໍ່ຖືກນຳມາສູ່ການພິພາກສາຢູ່
ຕໍ່ໜ້າເຮົາ, ແລ້ວໃຫ້ພວກເຈົ້າເບິ່ງວ່າ ພວກ
ເຈົ້າໄດ້ [ກ]ເຕືອນເຂົາໃນນາມຂອງເຮົາ,
ເພື່ອວ່າເຂົາຈະບໍ່ໄດ້ມາທຳຮ້າຍພວກເຈົ້າ
ອີກ, ທັງບໍ່ມາທຳຮ້າຍຄອບຄົວຂອງພວກ
ເຈົ້າ, ແມ່ນແຕ່ລູກຫລານຂອງພວກເຈົ້າຈົນ
ເຖິງຄົນລຸ້ນທີສາມ ແລະ ທີສີ່.
29 ແລະ ຈາກນັ້ນ, ຖ້າຫາກເຂົາມາທຳ
ຮ້າຍພວກເຈົ້າ ຫລື ຄອບຄົວຂອງພວກ
ເຈົ້າ, ຫລື ລູກຫລານຂອງພວກເຈົ້າຈົນເຖິງ
ຄົນລຸ້ນທີສາມ ແລະ ທີສີ່, ເຮົາໄດ້ປ່ອຍສັດ
ຕູຂອງພວກເຈົ້າໄວ້ຢູ່ໃນມືຂອງພວກເຈົ້າ
ແລ້ວ;
30 ແລະ ຈາກນັ້ນ ຖ້າຫາກພວກເຈົ້າ
ໄວ້ຊີວິດເຂົາ, ພວກເຈົ້າຈະໄດ້ຮັບລາງວັນ
ເພາະຄວາມຊອບທຳຂອງພວກເຈົ້າ; ແລະ
ລູກຂອງພວກເຈົ້າ ແລະ ລູກຂອງລູກຂອງ
ພວກເຈົ້າກໍຄືກັນ ຈົນເຖິງຄົນລຸ້ນທີສາມ
ແລະ ທີສີ່.

21 ກ ມຊຍ 23:21;
ຣລມ 12:3.
ຄມພ ຕີສອນ, ການຕີສອນ.
22 ກ ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.
ຂ ມທ 16:17–18;
ຄພ 33:12–13.
23 ກ ລກ 6:29;
ແອວ 43:46–47.
ຄມພ ຂົ່ມເຫັງ,
ການຂົ່ມເຫັງ.
24 ກ ມທ 7:1–2.
26 ກ ຄມພ ອົດທົນ,
ຄວາມອົດທົນ.
28 ກ ຄມພ ເຕືອນ, ຄຳເຕືອນ.

31 ເຖິງຢ່າງໃດກໍຕາມ, ສັດຕູຂອງພວກ
ເຈົ້າຢູ່ໃນມືຂອງພວກເຈົ້າ; ແລະ ຖ້າຫາກ
ພວກເຈົ້າໃຫ້ລາງວັນແກ່ເຂົາຕາມວຽກງານ
ຂອງເຂົາ ແລ້ວພວກເຈົ້າກໍຖືກຕ້ອງ; ຖ້າ
ຫາກເຂົາໝາຍໝັ້ນທີ່ຈະເອົາຊີວິດພວກ
ເຈົ້າ, ແລະ ຊີວິດຂອງພວກເຈົ້າຕົກຢູ່ໃນ
ຂັ້ນອັນຕະລາຍເພາະເຂົາ, ແລ້ວສັດຕູຂອງ
ພວກເຈົ້າຢູ່ໃນມືຂອງພວກເຈົ້າ ແລະ ພວກ
ເຈົ້າຖືກຕ້ອງ.

32 ຈົ່ງເບິ່ງ, ນີ້ເປັນກົດທີ່ເຮົາໄດ້ມອບໃຫ້
ແກ່ຜູ້ຮັບໃຊ້ຂອງເຮົາ ນີໄຟ, ແລະ *ກ*ບັນ
ພະບຸລຸດຂອງພວກເຈົ້າ, ໂຢເຊັບ, ແລະ
ຢາໂຄບ, ແລະ ອີຊາກ, ແລະ ອັບຣາຮາມ,
ແລະ ສາດສະດາ ແລະ ອັກຄະສາວົກທຸກ
ຄົນໃນສະໄໝບູຮານຂອງເຮົາ.

33 ແລະ ອີກເທື່ອໜຶ່ງ, ນີ້ຄື *ກ*ກົດທີ່ເຮົາ
ໄດ້ມອບໃຫ້ແກ່ຄົນໃນສະໄໝບູຮານຂອງ
ເຮົາ, ວ່າພວກເຂົາຈະບໍ່ອອກໄປສູ້ຮົບກັບ
ປະຊາຊາດໃດ, ຕະກຸນໃດ, ພາສາໃດ ຫລື
ຜູ້ຄົນໃດ, ຍົກເວັ້ນແຕ່ເຮົາ, ພຣະຜູ້ເປັນ
ເຈົ້າ, ໄດ້ບັນຊາພວກເຂົາ.

34 ແລະ ຖ້າຫາກປະຊາຊາດໃດ, ພາສາ
ໃດ, ຫລື ຜູ້ຄົນໃດປະກາດສົງຄາມກັບພວກ
ເຂົາ, ກ່ອນອື່ນໝົດພວກເຂົາຄວນຍົກປ້າຍ
ແຫ່ງ *ກ*ສັນຕິພາບຂຶ້ນແກ່ຜູ້ຄົນເຫລົ່ານັ້ນ,
ປະຊາຊາດນັ້ນ, ຫລື ພາສານັ້ນ;

35 ແລະ ຖ້າຫາກຜູ້ຄົນເຫລົ່ານັ້ນບໍ່ຍອມ
ຮັບຂໍ້ສະເໜີແຫ່ງສັນຕິພາບ, ທັງບໍ່ຍອມຮັບ
ເທື່ອທີສອງ ຫລື ເທື່ອທີສາມ, ແລ້ວພວກ
ເຂົາຄວນນຳປະຈັກພະຍານເຫລົ່ານັ້ນມາຢູ່
ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ;

36 ເມື່ອນັ້ນ ເຮົາ, ພຣະຜູ້ເປັນເຈົ້າ, ຈະ
ມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຂົາ, ແລະ
ຮັບຮອງພວກເຂົາໃນການອອກໄປສູ້ຮົບ
ກັບປະຊາຊາດນັ້ນ, ພາສານັ້ນ, ຫລື ຜູ້ຄົນ
ເຫລົ່ານັ້ນ.

37 ແລະ ເຮົາ, ພຣະຜູ້ເປັນເຈົ້າ, ຈະ *ກ*ສູ້
ຮົບໃຫ້ພວກເຂົາ, ແລະ ໃຫ້ລູກຂອງພວກ
ເຂົາ, ແລະ ໃຫ້ລູກຂອງລູກຂອງພວກເຂົາ,
ຈົນກວ່າພວກເຂົາຈະແກ້ແຄ້ນສັດຕູຂອງ
ພວກເຂົາທັງໝົດ, ຈົນເຖິງຄົນລຸ້ນທີສາມ
ແລະ ທີສີ່.

38 ຈົ່ງເບິ່ງ, ນີ້ຄືແບບຢ່າງໃຫ້ແກ່ຜູ້ຄົນ
ທັງປວງ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຈົ້າໄດ້ກ່າວ, ເພື່ອຄວາມຖືກ
ຕ້ອງຢູ່ຕໍ່ໜ້າເຮົາ.

39 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກ
ຫລັງຈາກສັດຕູຂອງພວກເຈົ້າໄດ້ມາທຳ
ຮ້າຍພວກເຈົ້າເທື່ອທຳອິດ, ແລ້ວເຂົາໄດ້
ກັບໃຈ ແລະ ໄດ້ມາຫາພວກເຈົ້າໂດຍອ້ອນ
ວອນຂໍອະໄພໂທດ, ກໍໃຫ້ພວກເຈົ້າອະໄພ
ໃຫ້ເຂົາ, ແລະ ບໍ່ຖືມັນເປັນປະຈັກພະຍານ
ກ່າວຟ້ອງສັດຕູຂອງພວກເຈົ້າອີກຕໍ່ໄປ—

40 ແລະ ຕໍ່ໄປເຖິງເທື່ອທີສອງ ແລະ
ເທື່ອທີສາມ; ແລະ ເລື້ອຍໆເທົ່າທີ່ສັດຕູ
ຂອງພວກເຈົ້າໄດ້ກັບໃຈຈາກຄວາມຜິດ
ຂອງເຂົາ ຊຶ່ງເຂົາໄດ້ເຮັດຜິດຕໍ່ພວກເຈົ້າ,
ພວກເຈົ້າຕ້ອງ *ກ*ອະໄພໃຫ້ເຂົາ, ຈົນເຖິງ
ເຈັດສິບເທື່ອຄູນເຈັດ.

41 ແລະ ຖ້າຫາກເຂົາເຮັດຜິດຕໍ່ພວກ
ເຈົ້າ ແລະ ບໍ່ກັບໃຈເທື່ອທຳອິດ, ເຖິງຢ່າງ
ໃດກໍຕາມ ພວກເຈົ້າຈະຕ້ອງອະໄພໃຫ້
ເຂົາ.

42 ແລະ ຖ້າຫາກເຂົາເຮັດຜິດຕໍ່ພວກ
ເຈົ້າເທື່ອທີສອງ, ແລະ ບໍ່ກັບໃຈ, ເຖິງຢ່າງ

32*ກ* ຄພ 27:10.
33*ກ* ພບຍ 20:10; ແອວ 48:14–16.
34*ກ* ຄພ 105:38–41.
37*ກ* ຢຊ 23:10; ອຊຢ 49:25.
40*ກ* ມທ 18:21–22; ຄພ 64:9–11. ຄມພ ອະໄພ, ໃຫ້ອະໄພ.

ໃດ ກໍ ຕາມ ພວກ ເຈົ້າ ຈະ ຕ້ອງອະໄພ ໃຫ້
ເຂົາ.
43 ແລະ ຖ້າ ຫາກ ເຂົາ ເຮັດ ຜິດ ຕໍ່ ພວກ
ເຈົ້າເທື່ອທີສາມ, ແລະ ບໍ່ກັບໃຈ, ພວກເຈົ້າ
ຈະຕ້ອງອະໄພໃຫ້ເຂົາຄືກັນ.
44 ແຕ່ຖ້າ ຫາກ ເຂົາ ເຮັດ ຜິດ ກັບ ພວກ
ເຈົ້າ ເທື່ອທີສີ່ ພວກ ເຈົ້າ ບໍ່ຕ້ອງອະໄພໃຫ້
ເຂົາ, ແຕ່ໃຫ້ນຳປະຈັກພະຍານ ເຫລົ່ານັ້ນ
ມາຟ້ອງຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ;
ແລະ ມັນຈະບໍ່ຖືກລຶບລ້າງຈົນກວ່າເຂົາກັບ
ໃຈ ແລະ ມອບ ລາງວັນ ໃຫ້ ແກ່ພວກ ເຈົ້າ
ສີ່ເທົ່າໃນທຸກສິ່ງທີ່ເຂົາໄດ້ເຮັດຜິດຕໍ່ພວກ
ເຈົ້າ.
45 ແລະ ຖ້າ ຫາກ ເຂົາ ເຮັດ ສິ່ງນີ້, ພວກ
ເຈົ້າ ຕ້ອງອະໄພ ໃຫ້ ເຂົາ ດ້ວຍ ສຸດ ໃຈ ຂອງ
ພວກເຈົ້າ; ແລະ ຖ້າຫາກເຂົາບໍ່ເຮັດສິ່ງນີ້,
ເຮົາ, ພຣະຜູ້ເປັນເຈົ້າ, ຈະ [ກ]ແກ້ແຄ້ນສັດຕູ
ຂອງພວກເຈົ້າໃຫ້ພວກເຈົ້າຮ້ອຍເທົ່າ;
46 ແລະ ກັບ ລູກ ຂອງ ເຂົາ, ແລະ ລູກ
ຂອງລູກຂອງເຂົາທັງໝົດທີ່ກຽດຊັງເຮົາ,
ຈົນເຖິງຄົນລຸ້ນ [ກ]ທີສາມ ແລະ ທີສີ່.
47 ແຕ່ ຖ້າ ຫາກ ລູກ ຂອງ ເຂົາ ກັບ ໃຈ,
ຫລື ລູກຂອງລູກຂອງເຂົາ, ແລະ [ກ]ຫັນມາ
ຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກ ເຂົາ, ດ້ວຍສຸດໃຈ ແລະ ດ້ວຍສຸດ
ພະລັງ, ຄວາມຄິດ, ແລະ ກຳລັງຂອງພວກ
ເຂົາ, ແລະ ຄືນສີ່ເທົ່າສຳລັບຄວາມຜິດທັງ
ໝົດຂອງພວກເຂົາ ທີ່ພວກເຂົາໄດ້ເຮັດຜິດ
ໄປນັ້ນ, ຫລື ພໍ່ຂອງພວກເຂົາໄດ້ເຮັດຜິດ
ໄປນັ້ນ, ຫລື ພໍ່ຂອງພໍ່ຂອງພວກເຂົາ, ເມື່ອ
ນັ້ນຄວາມເຄືອງແຄ້ນຂອງພວກເຈົ້າຈະຫັນ
ໜີໄປ;
48 ແລະ [ກ]ການ ແກ້ ແຄ້ນ ຈະ ບໍ່ ເກີດ ກັບ
ພວກ ເຂົາອີກຕໍ່ໄປ, ພຣະຜູ້ເປັນ ເຈົ້າ ອົງ
ເປັນພຣະເຈົ້າຂອງພວກເຈົ້າໄດ້ກ່າວ, ແລະ
ຄວາມຜິດຂອງພວກເຂົາຈະບໍ່ຖືກນຳມາ
ຟ້ອງ ຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າອີກ
ເລີຍ. ອາແມນ.

## ພາກທີ 99

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ເຖິງຈອນ ເມີດ໊ອກ, ວັນທີ 29 ເດືອນສິງຫາ 1832, ທີ່ເມືອງໄຮຣຳ, ລັດໂອໄຮໂອ. ເປັນເວລາຫລາຍກວ່າໜຶ່ງປີ, ຈອນ ເມີດ໊ອກ ໄດ້ສັ່ງສອນພຣະກິດຕິຄຸນ ໃນຂະນະທີ່ລູກໆຂອງລາວ—ຜູ້ບໍ່ມີແມ່ ຫລັງຈາກເມຍຂອງລາວ, ຈູເລຍ ຄະລາບ ໄດ້ເສຍຊີວິດໄປ, ໃນເດືອນເມສາ 1831—ໄດ້ອາໄສຢູ່ກັບຄອບຄົວຂອງຄົນອື່ນ ຢູ່ໃນລັດໂອໄຮໂອ.*

*1–8, ຈອນ ເມີດ໊ອກ ໄດ້ຖືກເອີ້ນໃຫ້ປະກາດພຣະກິດຕິຄຸນ, ແລະ ຄົນທີ່ຮັບເອົາລາວ ຍ່ອມຮັບເອົາພຣະຜູ້ເປັນເຈົ້າ ແລະ ຈະໄດ້ຮັບຄວາມເມດຕາ.*

1 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້
ກັບຜູ້ຮັບໃຊ້ຂອງເຮົາ ຈອນ ເມີດ໊ອກ—ເຈົ້າ
ຖືກເອີ້ນໃຫ້ໄປຫາດິນແດນພາກຕາເວັນ
ອອກ ຈາກເຮືອນໜຶ່ງຫາອີກເຮືອນໜຶ່ງ,
ຈາກໝູ່ບ້ານໜຶ່ງໄປຫາອີກໝູ່ບ້ານໜຶ່ງ,

45 *ກ* ມມ 8:20.
46 *ກ* ພບຍ 5:9–10.
47 *ກ* ມຊຢ 7:33; ມມ 9:6.
48 *ກ* ອຊກ 18:19–23.

ແລະ ຈາກ ເມືອງໜຶ່ງໄປຫາອີກເມືອງໜຶ່ງ, ເພື່ອປະກາດພຣະກິດຕິຄຸນອັນເປັນນິດຂອງເຮົາໃຫ້ແກ່ຜູ້ອາໄສຢູ່ໃນນັ້ນ, ໃນ ທ່າມກາງ [ກ]ການຂົ່ມເຫັງ ແລະ ຄວາມຊົ່ວຮ້າຍ.

2 ແລະ ຄົນໃດທີ່ [ກ]ຮັບເອົາເຈົ້າ ຍ່ອມຮັບເອົາເຮົາ; ແລະ ເຈົ້າຈະມີອຳນາດທີ່ຈະປະກາດຄຳຂອງເຮົາໂດຍ [ຂ]ການສະແດງອອກດ້ວຍພຣະວິນຍານສັກສິດຂອງເຮົາ.

3 ແລະ ຄົນໃດທີ່ຮັບເອົາເຈົ້າ [ກ]ດັ່ງເດັກນ້ອຍໆ, ກໍໄດ້ຮັບເອົາ [ຂ]ອານາຈັກຂອງເຮົາ; ແລະ ພວກເຂົາເປັນສຸກແລ້ວ, ເພາະພວກເຂົາຈະໄດ້ຮັບ [ຄ]ຄວາມເມດຕາ.

4 ແລະ ຜູ້ໃດກໍຕາມທີ່ປະຕິເສດເຈົ້າ ຈະຖືກ [ກ]ປະຕິເສດຈາກພຣະບິດາຂອງເຮົາ ແລະ ຄອບຄົວຂອງພຣະອົງ; ແລະເຈົ້າຈະລ້າງ [ຂ]ຕີນຂອງເຈົ້າຢູ່ໃນບ່ອນລັບລີ້ໃນລະຫວ່າງທາງ ເພື່ອເປັນປະຈັກພະຍານຟ້ອງພວກເຂົາ.

5 ແລະ ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາ [ກ]ມາຢ່າງໄວເພື່ອ [ຂ]ພິພາກສາ, ເພື່ອໃຫ້ພວກເຂົາຍອມຮັບການກະທຳທີ່ອະທຳທັງໝົດຂອງພວກເຂົາຊຶ່ງພວກເຂົາໄດ້ເຮັດຕໍ່ເຮົາ, ດັ່ງທີ່ມີຂຽນໄວ້ກ່ຽວກັບເຮົາໃນໜັງສືເຫລັ້ມໜຶ່ງ.

6 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ມັນບໍ່ເໝາະສົມທີ່ເຈົ້າຈະໄປຈົນກວ່າລູກໆຂອງເຈົ້າຖືກຈັດຫາໃຫ້ກ່ອນ, ແລະ ຖືກສົ່ງໄປຫາອະທິການຂອງຊີໂອນດ້ວຍຄວາມອ່ອນໂຍນ.

7 ແລະ ຫລັງຈາກບໍ່ຫລາຍປີຈາກນັ້ນ, ຖ້າຫາກເຈົ້າປາດຖະໜາຈາກເຮົາ, ເຈົ້າສາມາດຂຶ້ນໄປຍັງແຜ່ນດິນດີ, ເພື່ອຮັບເອົາມູນມໍລະດົກຂອງເຈົ້າ;

8 ຖ້າບໍ່ດັ່ງນັ້ນ ເຈົ້າຈົ່ງສືບຕໍ່ປະກາດພຣະກິດຕິຄຸນຂອງເຮົາ [ກ]ຈົນກວ່າເຈົ້າຖືກເອົາໄປ. ອາແມນ.

## ພາກທີ 100

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ຊິດນີ ຣິກດອນ, ທີ່ເມືອງແພຣິສະເບີກ, ລັດນິວຢອກ, ວັນທີ 12 ເດືອນຕຸລາ, 1833. ອ້າຍນ້ອງສອງຄົນ, ໂດຍທີ່ບໍ່ໄດ້ຢູ່ກັບຄອບຄົວຂອງເຂົາເຈົ້າຫລາຍມື້, ຮູ້ສຶກເປັນຫ່ວງເປັນໃຍນຳພວກເຂົາ.*

*1–4, ໂຈເຊັບ ແລະ ຊິດນີ ຕ້ອງສັ່ງສອນພຣະກິດຕິຄຸນເພື່ອຄວາມລອດຂອງຈິດວິນຍານ; 5–8, ມັນຈະຖືກມອບໃຫ້ແກ່ພວກເພິ່ນໃນຊົ່ວໂມງນັ້ນເອງ ສິ່ງທີ່ພວກເພິ່ນຄວນກ່າວ; 9–12, ຊິດນີຕ້ອງເປັນຄົນກ່າວ ແລະ ໂຈເຊັບຕ້ອງເປັນຜູ້ເປີດເຜີຍ ແລະ ມີພະລັງໃນປະຈັກພະຍານ; 13–17, ພຣະຜູ້ເປັນເຈົ້າຈະຍົກຜູ້ຄົນບໍລິສຸດຂຶ້ນ, ແລະ ຄົນທີ່ເຊື່ອຟັງຈະໄດ້ຮັບການຊ່ວຍໃຫ້ລອດ.*

**99** 1ກ ຄມພ ຂົ່ມເຫັງ, ການຂົ່ມເຫັງ.
2ກ ມທ 10:40.
ຂ 1 ກຣທ 2:4–5.
3ກ ມທ 18:1–6.
ຂ ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
ຄ ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
4ກ ຢຮ 12:44–50.
ຂ ຄພ 75:19–22.
5ກ ຄພ 1:11–14.
ຂ ຢດ 1:14–15. ຄມພ ພຣະເຢຊູຄຣິດ—ພິພາກສາ.
8ກ ມທ 19:29.

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້ກັບພວກເຈົ້າ, ເພື່ອນຂອງເຮົາ [ກ]ຊິດນີ ແລະ [ຂ]ໂຈເຊັບ, ຄອບຄົວຂອງພວກເຈົ້າສະບາຍດີ; ພວກເຂົາຢູ່ໃນມືຂອງເຮົາ, ແລະ ເຮົາຈະຈັດການກັບພວກເຂົາດັ່ງທີ່ເຮົາເຫັນວ່າດີ; ເພາະເຮົາມີອຳນາດໃນທຸກສິ່ງທັງປວງ.

2 ສະນັ້ນ, ຈົ່ງຕາມເຮົາມາ, ແລະ ຟັງຄຳແນະນຳຊຶ່ງເຮົາຈະມອບໃຫ້ແກ່ພວກເຈົ້າ.

3 ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາມີຜູ້ຄົນຢ່າງຫລວງຫລາຍຢູ່ໃນບ່ອນນີ້, ໃນພາກພື້ນຕ່າງໆທີ່ອ້ອມຮອບ; ແລະ ປະຕູທີ່ມີປະສິດທິພາບຈະເປີດໃນພາກພື້ນຕ່າງໆທີ່ອ້ອມຮອບ ໃນພາກຕາເວັນອອກຂອງແຜ່ນດິນນີ້.

4 ສະນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ຈຶ່ງຍອມໃຫ້ພວກເຈົ້າມາບ່ອນນີ້; ເພາະເຮົາເຫັນວ່າເໝາະສົມເພື່ອ [ກ]ຄວາມລອດຂອງຈິດວິນຍານ.

5 ສະນັ້ນ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ຈົ່ງເປັ່ງສຽງຂອງພວກເຈົ້າແກ່ຜູ້ຄົນພວກນີ້; [ກ]ກ່າວຄວາມຄິດທີ່ເຮົາຈະເອົາໃສ່ໃນໃຈຂອງພວກເຈົ້າ, ແລະ ພວກເຈົ້າຈະບໍ່ຖືກເຮັດໃຫ້ຈຳນົນຢູ່ຕໍ່ໜ້າມະນຸດ;

6 ເພາະມັນຈະຖືກ [ກ]ມອບໃຫ້ພວກເຈົ້າໃນຊົ່ວໂມງນັ້ນເອງ, ແທ້ຈິງແລ້ວ, ໃນເວລານັ້ນເອງ, ສິ່ງທີ່ພວກເຈົ້າຈະກ່າວ.

7 ແຕ່ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າວ່າ ພວກເຈົ້າຈະ [ກ]ປະກາດສິ່ງໃດກໍຕາມທີ່ພວກເຈົ້າປະກາດໃນນາມຂອງເຮົາ, ດ້ວຍໃຈທີ່ນອບນ້ອມ, ດ້ວຍວິນຍານຂອງ [ຂ]ຄວາມອ່ອນໂຍນ, ໃນທຸກສິ່ງທັງປວງ.

8 ແລະ ເຮົາຈະມອບຄຳສັນຍານີ້ໃຫ້ແກ່ພວກເຈົ້າ, ວ່າຕາບໃດທີ່ພວກເຈົ້າເຮັດສິ່ງນີ້ [ກ]ພຣະວິນຍານບໍລິສຸດ ຈະຖືກສົ່ງໄປໃຫ້ໃນການເປັນພະຍານເຖິງທຸກສິ່ງທັງປວງສິ່ງໃດກໍຕາມທີ່ພວກເຈົ້າຈະກ່າວ.

9 ແລະ ເຮົາເຫັນສົມຄວນທີ່ພວກເຈົ້າ, ຜູ້ຮັບໃຊ້ຂອງເຮົາ ຊິດນີ, ຄວນເປັນ [ກ]ຜູ້ກ່າວຕໍ່ຜູ້ຄົນພວກນີ້; ແທ້ຈິງແລ້ວ, ຕາມຄວາມຈິງ, ເຮົາຈະແຕ່ງຕັ້ງເຈົ້າສູ່ການເອີ້ນນີ້, ແມ່ນແຕ່ເປັນຜູ້ກ່າວໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ.

10 ແລະ ເຮົາຈະມອບອຳນາດໃຫ້ແກ່ລາວເພື່ອຈະມີພະລັງໃນ [ກ]ປະຈັກພະຍານ.

11 ແລະ ເຮົາຈະມອບອຳນາດໃຫ້ແກ່ເຈົ້າ ເພື່ອຈະມີ [ກ]ພະລັງໃນການອະທິບາຍພຣະຄຳພີທັງໝົດ, ເພື່ອວ່າເຈົ້າຈະໄດ້ເປັນຜູ້ກ່າວໃຫ້ແກ່ລາວ, ແລະ ລາວຈະເປັນ [ຂ]ຜູ້ເປີດເຜີຍໃຫ້ແກ່ເຈົ້າ, ເພື່ອວ່າເຈົ້າຈະໄດ້ຮູ້ເຖິງຄວາມແນ່ນອນໃນທຸກສິ່ງທັງປວງກ່ຽວກັບສິ່ງ ທີ່ເປັນຂອງອານາຈັກຂອງເຮົາຢູ່ເທິງແຜ່ນດິນໂລກ.

12 ສະນັ້ນ, ພວກເຈົ້າຈົ່ງເດີນທາງຕໍ່ໄປ ແລະ ປິຕິຍິນດີເຖີດ; ເພາະຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາຢູ່ກັບພວກເຈົ້າ ແມ່ນແຕ່ຈົນເຖິງທີ່ສຸດ.

13 ແລະ ບັດນີ້ ເຮົາຈະມອບຄຳໜຶ່ງໃຫ້ແກ່ພວກເຈົ້າກ່ຽວກັບ [ກ]ຊີໂອນ. ຊີໂອນຈະ

**100** 1 *ກ* ຄມພ ຣິກດອນ, ຊິດນີ.
*ຂ* ຄມພ ສະມິດ, ໂຈເຊັບ, ຜູ້ລູກ.
4 *ກ* ຄມພ ລອດ, ຄວາມລອດ.
5 *ກ* ຣລມ 5:18; ຄພ 68:3–4.
6 *ກ* ມທ 10:19–20; ຄພ 84:85.
7 *ກ* ຄພ 84:61.
*ຂ* ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
8 *ກ* 2 ນຟ 33:1–4.
9 *ກ* ອພຍ 4:14–16; 2 ນຟ 3:17–18; ຄພ 124:103–104.
10 *ກ* ຄມພ ເປັນພະຍານ.
11 *ກ* ແອວ 17:2–3.
*ຂ* ຄພ 124:125.
13 *ກ* ຄມພ ຊີໂອນ.

ຖືກ ຂໄຖ່, ເຖິງແມ່ນວ່ານາງ ຈະຖືກຕີສອນ
ຊົ່ວໄລຍະໜຶ່ງ.
14 ອ້າຍນ້ອງຂອງພວກເຈົ້າ, ຜູ້ຮັບໃຊ້
ຂອງເຮົາ ກອໍສັນ ຮາຍດ໌ ແລະ ຈອນ ກູນ,
ແມ່ນຢູ່ໃນມືຂອງເຮົາ; ແລະ ຕາບໃດທີ່
ພວກເຂົາຍັງຮັກສາບັນຍັດຂອງເຮົາ ພວກ
ເຂົາຈະລອດ.
15 ສະນັ້ນ, ຈົ່ງສະບາຍໃຈເຖີດ; ເພາະ
ກທຸກສິ່ງທັງປວງຈະທຳງານນຳກັນ ເພື່ອ
ຄວາມດີຕໍ່ຄົນທີ່ເດີນໄປຢ່າງພາກພູມໃຈ,
ແລະ ເພື່ອການຊຳລະສາດສະໜາຈັກໃຫ້
ບໍລິສຸດ.
16 ເພາະເຮົາຈະຍົກຜູ້ຄົນທີ່ ກບໍລິສຸດ
ຂຶ້ນໃຫ້ແກ່ເຮົາ, ທີ່ຈະຮັບໃຊ້ເຮົາໃນຄວາມ
ຊອບທຳ;
17 ແລະ ທຸກຄົນທີ່ ກເອີ້ນຫາພຣະນາມ
ຂອງພຣະຜູ້ເປັນເຈົ້າ, ແລະ ຮັກສາພຣະ
ບັນຍັດຂອງພຣະອົງຈະລອດ. ແມ່ນເປັນ
ດັ່ງນັ້ນ. ອາແມນ.

# ພາກທີ 101

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 16 ແລະ 17 ເດືອນທັນວາ, 1833. ໃນເວລານີ້ໄພ່ພົນຂອງພຣະເຈົ້າຜູ້ໄດ້ມາເຕົ້າໂຮມກັນໃນລັດມີເຊີຣີໄດ້ຮັບທຸກທໍລະມານຢ່າງໜັກກັບການຂົ່ມເຫັງ. ກຸ່ມອັນຕະພານໄດ້ຂັບໄລ່ເຂົາເຈົ້າອອກຈາກບ້ານເຮືອນຂອງເຂົາເຈົ້າໃນເຂດແຈັກສັນ; ແລະ ໄພ່ພົນຂອງພຣະເຈົ້າບາງຈຳນວນໄດ້ພະຍາຍາມຕັ້ງຖິ່ນຖານຢູ່ເຂດແວນບູເຣັນ, ເຂດລາຟາແອດ, ແລະ ເຂດເຣ, ແຕ່ການຂົ່ມເຫັງຍັງເກີດຂຶ້ນກັບເຂົາເຈົ້າຢູ່. ໃນຕອນນີ້ໄພ່ພົນຂອງພຣະເຈົ້າສ່ວນໃຫຍ່ແມ່ນຢູ່ໃນເຂດຄະເລ, ລັດມີເຊີຣີ. ການຂູ່ເຂັນວ່າຈະເອົາຊີວິດບາງຄົນໃນສາດສະໜາຈັກແມ່ນມີຫລາຍ. ໄພ່ພົນຂອງພຣະເຈົ້າຢູ່ໃນເຂດແຈັກສັນໄດ້ສູນເສຍເຄື່ອງເຮືອນ, ເຄື່ອງນຸ່ງຫົ່ມ, ສັດລ້ຽງ, ແລະ ຊັບສົມບັດສ່ວນຕົວອື່ນໆ; ແລະ ພືດພັນຂອງເຂົາເຈົ້າກໍໄດ້ຖືກທຳລາຍ.*

*1–8, ໄພ່ພົນຂອງພຣະເຈົ້າໄດ້ຖືກຕີສອນ ແລະ ເປັນທຸກ ເພາະການລ່ວງລະເມີດຂອງເຂົາເຈົ້າ; 9–15, ຄວາມເຄືອງແຄ້ນຂອງພຣະຜູ້ເປັນເຈົ້າຈະຕົກໃສ່ເທິງປະຊາຊາດ, ແຕ່ຜູ້ຄົນຂອງພຣະອົງຈະຖືກເຕົ້າໂຮມ ແລະ ໄດ້ຮັບການປອບໂຍນ; 16–21, ຊີໂອນ ແລະ ສະເຕກຂອງນາງຈະຖືກຈັດຕັ້ງຂຶ້ນ; 22–31, ລັກສະນະຂອງຊີວິດລະຫວ່າງພັນປີໄດ້ຖືກບັນຍາຍໄວ້; 32–42, ໄພ່ພົນຂອງພຣະເຈົ້າຈະໄດ້ຮັບພອນ ແລະ ລາງວັນໃນເວລານັ້ນ; 43–62, ຄຳອຸປະມາເລື່ອງເຈົ້ານາຍ ແລະ ຕົ້ນໝາກກອກໝາຍເຖິງຄວາມຫຍຸ້ງຍາກ ແລະ ການໄຖ່ຊີໂອນໃນທີ່ສຸດ; 63–75, ໄພ່ພົນຂອງພຣະເຈົ້າຕ້ອງມາເຕົ້າໂຮມກັນຕໍ່ໄປ; 76–80, ພຣະຜູ້ເປັນເຈົ້າໄດ້ຈັດຕັ້ງກົດລັດຖະທຳມະນູນ*

13 *ຂ* ຄພ 84:99;
105:9–10, 31, 37.
14 *ກ* ຄມພ ຮາຍດ໌, ອໍສັນ.
15 *ກ* ຣມ 8:28;
ຄພ 90:24; 105:40.
16 *ກ* ຄມພ ບໍລິສຸດ, ຜູ້ບໍລິ
ສຸດ, ຄວາມບໍລິສຸດ.
17 *ກ* ຢອ 2:32;
ແອວ 38:4–5.

*ຂອງສະຫະລັດອາເມຣິກາຂຶ້ນ; 81–101, ໄພ່ພົນຂອງພຣະເຈົ້າຕ້ອງຮ້ອງຂໍໃຫ້ມີການຊົດໃຊ້ສຳລັບຄວາມທຸກໂສກ, ຕາມຄຳອຸປະມາເລື່ອງຍິງຄົນໜຶ່ງ ແລະ ຜູ້ຕັດສິນທີ່ບໍ່ທ່ຽງທຳ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າ, ກ່ຽວກັບອ້າຍເອື້ອຍນ້ອງຂອງພວກ
ເຈົ້າ ຜູ້ໄດ້ຮັບທຸກທໍລະມານ, ແລະ ຖືກ ᵃຂົ່ມ
ເຫັງ, ແລະ ຖືກ ᵇຂັບໄລ່ໜີຈາກແຜ່ນດິນທີ່
ເປັນມູນມໍລະດົກຂອງພວກເຂົາ—
2 ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ຍອມໃຫ້
ᵃຄວາມທຸກທໍລະມານມາເຖິງພວກເຂົາ,
ຊຶ່ງດ້ວຍສິ່ງນັ້ນພວກເຂົາຈຶ່ງໄດ້ຮັບທຸກທໍ
ລະມານ, ອັນເປັນຜົນມາຈາກ ᵇການລ່ວງ
ລະເມີດຂອງພວກເຂົາ;
3 ແຕ່ເຮົາຈະເປັນເຈົ້າຂອງ ຂອງພວກ
ເຂົາ, ແລະ ພວກເຂົາຈະເປັນ ᵃຂອງເຮົາ
ໃນວັນນັ້ນ ເມື່ອເຮົາຈະມາເລືອກເພັດພອຍ
ຂອງເຮົາ.
4 ສະນັ້ນ, ພວກເຂົາຈຳເປັນຕ້ອງຖືກ ᵃຕີ
ສອນ ແລະ ຖືກທົດລອງ, ແມ່ນແຕ່ດັ່ງ ᵇອັບ
ຣາຮາມ, ຜູ້ໄດ້ຖືກບັນຊາໃຫ້ຖວາຍລູກ
ຊາຍຄົນດຽວຂອງລາວ.
5 ເພາະທຸກຄົນທີ່ຈະບໍ່ອົດທົນຕໍ່ການຕີ
ສອນ, ແລະ ᵃປະຕິເສດເຮົາ, ຈະບໍ່ສາມາດ
ຖືກ ᵇຊຳລະໃຫ້ບໍລິສຸດໄດ້.
6 ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ
ມັນມີການໂຕ້ຕອບ, ແລະ ᵃການຂັດແຍ້ງ,
ແລະ ᵇການອິດສາບັງບຽດ, ແລະ ການຜິດ
ຖຽງກັນ, ແລະ ᶜຕັນຫາລາມົກ ແລະ ຄວາມ
ມັກໂລບມາກໂລພາຢູ່ໃນບັນດາພວກ
ເຂົາ; ສະນັ້ນໂດຍສິ່ງເຫລົ່ານີ້ພວກເຂົາຈຶ່ງ
ໄດ້ເຮັດໃຫ້ມູນມໍລະດົກຂອງພວກເຂົາເປິ
ເປື້ອນ.
7 ພວກເຂົາຊັກຊ້າໃນການໄດ້ ᵃຍິນສຸລະ
ສຽງຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຂົາ; ສະນັ້ນ, ພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຂົາ ຈຶ່ງຊັກຊ້າ
ໃນການໄດ້ຍິນຄຳອະທິຖານຂອງພວກ
ເຂົາ, ເພື່ອຕອບພວກເຂົາໃນວັນທີ່ພວກ
ເຂົາມີຄວາມຫຍຸ້ງຍາກ.
8 ໃນວັນທີ່ພວກເຂົາມີສັນຕິສຸກ ພວກ
ເຂົາຖືຄຳແນະນຳຂອງເຮົາເປັນເລື່ອງ
ຫລິ້ນໆ; ແຕ່, ໃນວັນທີ່ພວກເຂົາມີ ᵃຄວາມ
ຫຍຸ້ງຍາກ, ດ້ວຍຄວາມຈຳເປັນພວກເຂົາ
ຈຶ່ງ ᵇຊອກຫາເຮົາ.
9 ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າ, ເຖິງແມ່ນພວກເຂົາມີບາບ, ແຕ່
ອຸທອນຂອງເຮົາຍັງເຕັມໄປດ້ວຍ ᵃຄວາມ
ເມດຕາສົງສານຕໍ່ພວກເຂົາ. ເຮົາຈະບໍ່
ᵇຂັບໄລ່ພວກເຂົາອອກໄປ; ແລະ ໃນວັນ
ແຫ່ງ ᶜພຣະພິໂລດຂອງເຮົາ, ເຮົາຈະລະ
ນຶກເຖິງຄວາມເມດຕາ.

---

**101** 1 *ກ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
*ຂ* ຄພ 103:1–2, 11; 109:47.
2 *ກ* ຄພ 58:3–4.
*ຂ* ມຊຢ 7:29–30; ຄພ 103:4; 105:2–10.
3 *ກ* ອຊຢ 62:3; ມລກ 3:17; ຄພ 60:4.
4 *ກ* ຄພ 95:1–2; 136:31. ຄມພ ຕີສອນ, ການຕີສອນ.
*ຂ* ປຖກ 22:1–14; ຢຄ 4:5. ຄມພ ອັບຣາຮາມ.
5 *ກ* ມທ 10:32–33; ຣມ 1:16; 2 ນຟ 31:14.
*ຂ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
6 *ກ* ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຂ* ຄມພ ອິດສາ.
*ຄ* ຄມພ ກິເລດຕັນຫາ.
7 *ກ* ອຊຢ 59:2; ມຊຢ 11:22–25; 21:15; ແອວ 5:38.
8 *ກ* ຣລມ 12:3.
*ຂ* ກຈກ 17:27; ແອວ 32:5–16.
9 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ; ເມດຕາສົງສານ, ຄວາມເມດຕາສົງສານ.
*ຂ* ຢມຢ 30:11.
*ຄ* ຄພ 98:21–22.

10 ເຮົາ ໄດ້ ສາບານ, ແລະ ອອກ ຄຳ ສັ່ງ
ໄປແລ້ວໂດຍບັນຍັດກ່ອນໜ້ານີ້ ຊຶ່ງເຮົາໄດ້
ມອບ ໃຫ້ພວກເຈົ້າ, ວ່າ ເຮົາຈະ ໃຫ້ [ກ]ດາບ
ແຫ່ງຄວາມເຄືອງແຄ້ນຂອງເຮົາລົງມາຕໍ່ສູ້
ແທນຜູ້ຄົນຂອງເຮົາ; ແລະ ແມ່ນແຕ່ດັ່ງທີ່
ເຮົາໄດ້ກ່າວໄວ້, ມັນຈະບັງເກີດຂຶ້ນ.
11 ບໍ່ດົນຄວາມເຄືອງແຄ້ນຂອງເຮົາຈະ
ຖອກເທລົງມາເທິງປະຊາຊາດທັງປວງຈົນ
ວັດແທກບໍ່ໄດ້; ແລະ ເຮົາຈະເຮັດສິ່ງນີ້ເມື່ອ
ຈອກ ແຫ່ງຄວາມຊົ່ວຮ້າຍ ຂອງພວກເຂົາ
[ກ]ເຕັມປ່ຽມ.
12 ແລະ ໃນວັນນັ້ນ ຄົນທັງປວງທີ່ຖືກພົບ
ເຫັນ ຢູ່ ເທິງ [ກ]ປ້ອມຍາມ, ຫລື ອີກຄຳ ໜຶ່ງ,
ອິດສະຣາເອນທັງໝົດຂອງເຮົາ, ຈະລອດ.
13 ແລະ ຜູ້ທີ່ກະຈັດກະຈາຍໄປຈະຖືກ
[ກ]ເຕົ້າໂຮມເຂົ້າກັນ.
14 ແລະ ທຸກຄົນທີ່ [ກ]ໂສກເສົ້າຈະຖືກ
ປອບໂຍນ.
15 ແລະ ທຸກຄົນທີ່ໄດ້ສະລະ [ກ]ຊີວິດຂອງ
ພວກເຂົາເພື່ອນາມຂອງເຮົາຈະໄດ້ຮັບ
ການສວມມົງກຸດ.
16 ສະນັ້ນ, ຈົ່ງສະບາຍໃຈເຖີດກ່ຽວກັບ
ຊີໂອນ; ເພາະວ່າເນື້ອໜັງທັງປວງຢູ່ໃນ [ກ]ມື
ຂອງເຮົາ; ຈົ່ງສະຫງົບ ແລະ [ຂ]ຮູ້ວ່າເຮົາຄື
ພຣະເຈົ້າ.
17 [ກ]ຊີໂອນຈະບໍ່ຖືກຍ້າຍອອກໄປຈາກ
ບ່ອນ ຂອງ ນາງ, ເຖິງແມ່ນວ່າລູກຫລານ
ຂອງນາງຈະກະຈັດກະຈາຍໄປກໍຕາມ.
18 ຜູ້ທີ່ເຫລືອຢູ່, ແລະ ມີໃຈບໍລິສຸດ, ຈະ
ກັບຄືນມາ, ແລະ ມາຫາ [ກ]ມູນມໍລະດົກຂອງ
ພວກເຂົາ, ພວກເຂົາ ແລະ ລູກຫລານຂອງ
ພວກເຂົາ, ດ້ວຍ [ຂ]ເພງແຫ່ງຄວາມສຸກອັນ
ເປັນນິດ, ເພື່ອ [ຄ]ເສີມສ້າງແຜ່ນດິນທີ່ຮົກ
ຮ້າງຂອງຊີໂອນຂຶ້ນໃໝ່—
19 ແລະ ສິ່ງເຫລົ່ານີ້ທັງໝົດ [ຈະ ເກີດ
ຂຶ້ນ] ເພື່ອວ່າຖ້ອຍຄຳຂອງສາດສະດາຈະ
ສຳເລັດຄົບຖ້ວນ.
20 ແລະ, ຈົ່ງເບິ່ງ, ບໍ່ມີ [ກ]ສະຖານທີ່ອື່ນ
ໃດ ທີ່ ໄດ້ ຖືກ ກຳ ນົດ ໄວ້ ທີ່ນອກເໜືອໄປ
ຈາກສະຖານທີ່ທີ່ເຮົາໄດ້ກຳນົດໄວ້ໃຫ້; ທັງ
ຈະບໍ່ມີສະຖານທີ່ອື່ນໃດທີ່ຈະຖືກກຳນົດໄວ້
ທີ່ນອກເໜືອໄປຈາກສະຖານທີ່ ທີ່ເຮົາກຳ
ນົດໄວ້, ເພື່ອວຽກງານຂອງການເຕົ້າໂຮມ
ໄພ່ພົນຂອງພຣະເຈົ້າ—
21 ຈົນ ກວ່າ ວັນ ນັ້ນ ຈະ ມາ ເຖິງ ເມື່ອ
ຈະຖືກພົບວ່າບໍ່ມີບ່ອນວ່າງສຳລັບພວກ
ເຂົາອີກ; ແລະ ຈາກນັ້ນ ເຮົາໄດ້ມີບ່ອນ
ອື່ນ ຊຶ່ງເຮົາຈະກຳນົດໄວ້ໃຫ້ພວກເຂົາ,
ແລະ ສະຖານທີ່ເຫລົ່ານັ້ນຈະຖືກເອີ້ນວ່າ
[ກ]ສະເຕກ, ເພື່ອເປັນຜ້າມຸງ ຫລື ເປັນພະລັງ
ຂອງຊີໂອນ.
22 ຈົ່ງ ເບິ່ງ, ມັນ ເປັນ ຄວາມ ປະສົງ ຂອງ
ເຮົາ, ທີ່ຜູ້ຄົນທັງປວງທີ່ເອີ້ນຫານາມຂອງ
ເຮົາ, ແລະ ນະມັດສະການ ເຮົາຕາມພຣະ
ກິດຕິຄຸນອັນເປັນນິດຂອງເຮົາ, ຄວນ [ກ]ເຕົ້າ
ໂຮມກັນ, ແລະ [ຂ]ຢືນຢູ່ໃນສະຖານທີ່ສັກສິດ;

10 *ກ* ຄພ 1:13–14.
11 *ກ* ຣລມ 13:14; ອທ 2:9–11.
12 *ກ* ຄມພ ຍາມ, ຄົນຍາມ.
13 *ກ* ພບຍ 30:3–6; 1 ນຟ 10:14. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
14 *ກ* ມທ 5:4.
15 *ກ* ມທ 10:39. ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
16 *ກ* ມຊ 6:32.
*ຂ* ອພຍ 14:13–14; ພສສ 46:10.
17 *ກ* ຄມພ ຊີໂອນ.
18 *ກ* ຄພ 103:11–14.
*ຂ* ອຊຢ 35:10; ຄພ 45:71. ຄມພ ຮ້ອງ.
*ຄ* ອມ 9:13–15; ຄພ 84:2–5; 103:11.
20 *ກ* ຄພ 57:1–4.
21 *ກ* ຄພ 82:13–14; 115:6, 17–18. ຄມພ ສະເຕກ.
22 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* ມທ 24:15; ຄພ 45:32; 115:6.

23 ແລະ ຕຽມສຳລັບການເປີດເຜີຍຊຶ່ງ
ຈະມາເຖິງ, ເມື່ອ ກມ່ານທີ່ເປັນເຄື່ອງຄຸມ
ຂອງພຣະວິຫານຂອງເຮົາ, ໃນສະຖານທີ່
ນະມັດສະການຂອງເຮົາ, ຊຶ່ງເຊື່ອງແຜ່ນ
ດິນໂລກໄວ້ຢູ່, ຈະຖືກເອົາອອກໄປ, ແລະ
ເນື້ອໜັງທັງປວງຈະໄດ້ ຂເຫັນເຮົາພ້ອມ
ກັນ.
24 ແລະ ທຸກສິ່ງທີ່ ກເສື່ອມໂຊມ, ທັງ
ມະນຸດ, ຫລື ສັດສາວາສິ່ງ ຢູ່ ໃນທົ່ງ, ຫລື
ຝູງນົກໃນຟ້າສະຫວັນ, ຫລື ປາໃນທະເລ,
ທີ່ອາໄສຢູ່ໃນພື້ນແຜ່ນດິນໂລກ, ຈະຖືກ
ຂເຜົາຜານ;
25 ແລະ ທາດຕ່າງໆຈະ ກລະລາຍດ້ວຍ
ຄວາມຮ້ອນອັນແຮງກ້ານຳອີກ; ແລະ ທຸກ
ສິ່ງຈະກັບ ຂໃໝ່, ເພື່ອວ່າຄວາມຮູ້ ແລະ
ຄລັດສະໝີພາບຂອງເຮົາຈະປະທັບຢູ່ທົ່ວ
ແຜ່ນດິນໂລກ.
26 ແລະ ໃນວັນນັ້ນ ກຄວາມກຽດຊັງຂອງ
ມະນຸດ, ແລະ ຄວາມກຽດຊັງຂອງສັດສາ
ວາສິ່ງ, ແທ້ຈິງແລ້ວ, ຄວາມກຽດຊັງຂອງ
ເນື້ອໜັງທັງປວງຈະ ຂໝົດໄປຢູ່ຕໍ່ໜ້າເຮົາ.
27 ແລະ ໃນວັນນັ້ນ ສິ່ງ ໃດ ກໍຕາມທີ່
ມະນຸດຈະທູນຂໍ, ມັນຈະຖືກມອບໃຫ້ແກ່
ເຂົາ.
28 ແລະ ໃນ ວັນ ນັ້ນ ກຊາຕານ ຈະ ບໍ່ ມີ
ອຳນາດທີ່ຈະລໍ້ລວງມະນຸດຄົນໃດ.
29 ແລະ ຈະບໍ່ມີ ກຄວາມໂສກເສົ້າ ເພາະ
ບໍ່ມີຄວາມຕາຍ.
30 ໃນວັນນັ້ນ ກເດັກແດງທາລົກຈະບໍ່
ຕາຍຈົນກວ່າເຂົາຈະແກ່ເຖົ້າ; ແລະ ຊີວິດ
ຂອງເຂົາຈະເປັນດັ່ງອາຍຸຂອງຕົ້ນໄມ້;
31 ແລະ ເມື່ອເຂົາຕາຍ, ເຂົາຈະບໍ່ຫລັບ
ໄປ, ນັ້ນໝາຍເຖິງໃນດິນ, ແຕ່ຈະຖືກ ກປ່ຽນ
ໄປໃນພິບຕາດຽວ, ແລະ ຈະຖືກ ຂຍົກຂຶ້ນ
ໄປ, ແລະ ຄວາມພັກຜ່ອນຂອງເຂົາຈະຮຸ່ງ
ເຫລື້ອມ.
32 ແທ້ ຈິງ ແລ້ວ, ຕາມ ຄວາມ ຈິງ ເຮົາ
ກ່າວກັບພວກເຈົ້າວ່າ ໃນ ກວັນນັ້ນ ເມື່ອ
ພຣະຜູ້ເປັນເຈົ້າຈະສະເດັດມາ, ພຣະອົງ
ຈະ ຂເປີດເຜີຍທຸກສິ່ງທັງປວງ—
33 ສິ່ງທີ່ຜ່ານມາ, ແລະ ກສິ່ງລີ້ລັບຊຶ່ງບໍ່ມີ
ຄົນໃດຮູ້, ສິ່ງທີ່ກ່ຽວກັບແຜ່ນດິນໂລກ, ຊຶ່ງ
ໂດຍສິ່ງນັ້ນພຣະອົງໄດ້ສ້າງມັນຂຶ້ນ, ແລະ
ຈຸດປະສົງ ແລະ ເປົ້າໝາຍຂອງມັນ—
34 ສິ່ງທີ່ລ້ຳຄ່າທີ່ສຸດ, ສິ່ງທີ່ຢູ່ເບື້ອງເທິງ
ແລະ ສິ່ງທີ່ຢູ່ເບື້ອງລຸ່ມ, ແລະ ສິ່ງທີ່ຢູ່ໃນ
ແຜ່ນດິນໂລກ, ແລະ ສິ່ງທີ່ຢູ່ເທິງແຜ່ນດິນ
ໂລກ, ແລະ ໃນຟ້າສະຫວັນ.
35 ແລະ ທຸກຄົນທີ່ທົນກັບ ກການຂົ່ມເຫັງ
ເພື່ອນາມຂອງເຮົາ, ແລະ ອົດທົນດ້ວຍ
ສັດທາ, ເຖິງແມ່ນພວກເຂົາໄດ້ຖືກເອີ້ນໃຫ້
ມອບຊີວິດຂອງພວກເຂົາເພື່ອ ຂເຫັນແກ່

23 ກ ຄມພ ມ່ານ.
ຂ ອຊຢ 40:5;
ຄພ 38:8; 93:1.
ຄມພ ການສະເດັດມາຄັ້ງທີ
ສອງຂອງພຣະເຢຊູຄຣິດ.
24 ກ ຄພ 29:24.
ຂ ຊຟຢ 1:2–3;
ມລກ 4:1;
ຄພ 88:94;
ຈສ—ປ 1:37.
25 ກ ອມ 9:5;
2 ປຕ 3:10–14.
ຄມພ ແຜ່ນດິນໂລກ—ການ
ຊຳລະລ້າງແຜ່ນດິນໂລກ.
ຂ ພນມ 21:5.
ຄ ຄມພ ພັນປີ.
26 ກ ອຊຢ 11:6–9.
ຄມພ ເປັນສັດຕູກັນ,
ຄວາມເປັນສັດຕູກັນ.
ຂ ຄມພ ສະຫງົບ,
ຄວາມສະຫງົບ.
28 ກ ພນມ 20:2–3;
1 ນຟ 22:26;
ຄພ 88:110.
29 ກ ພນມ 21:4.
30 ກ ອຊຢ 65:20–22;
ຄພ 63:51.
31 ກ 1 ກຣທ 15:52;
ຄພ 43:32.
ຂ 1 ທສນ 4:16–17.
32 ກ ຄພ 29:11.
ຄມພ ພັນປີ.
ຂ ຄພ 121:26–28.
33 ກ ຄມພ ຄວາມລຶກລັບ
ຂອງພຣະເຈົ້າ.
35 ກ ຄພ 63:20.
ຄມພ ຂົ່ມເຫັງ,
ການຂົ່ມເຫັງ.
ຂ ຄພ 98:13.

ເຮົາ, ພວກເຂົາຈະຍັງໄດ້ຮັບລັດສະໝີພາບ
ນີ້ທັງໝົດ.
36 ດັ່ງນັ້ນ, ຢ່າສູ່ຢ້ານ ແມ່ນແຕ່ຈົນເຖິງ
ແກ່ [ກ]ຄວາມຕາຍ; ເພາະໃນໂລກນີ້ [ຂ]ຄວາມ
ສຸກຂອງພວກເຈົ້າບໍ່ ບໍລິບູນ, ແຕ່ໃນເຮົາ
ຄວາມສຸກຂອງພວກເຈົ້າບໍລິບູນ.
37 ສະນັ້ນ, ຢ່າເປັນຫ່ວງກັບຮ່າງກາຍ,
ຫລື ຊີວິດຂອງຮ່າງກາຍ; ແຕ່ໃຫ້ເປັນຫ່ວງ
ກັບ [ກ]ຈິດວິນຍານ, ແລະ ກັບຊີວິດຂອງຈິດ
ວິນຍານ.
38 ແລະ ຈົ່ງ [ກ]ສະແຫວງ ຫາ ພຣະ ພັກ
ຂອງພຣະຜູ້ເປັນເຈົ້າສະເໝີໄປ, ເພື່ອວ່າ
ໃນ [ຂ]ຄວາມອົດທົນ ພວກເຈົ້າຈະໄດ້ຄອບ
ຄອງ ຈິດ ວິນ ຍານ ຂອງ ພວກ ເຈົ້າ, ແລະ
ພວກເຈົ້າຈະມີຊີວິດນິລັນດອນ.
39 ເມື່ອມະນຸດຖືກເອີ້ນໃຫ້ມາສູ່ [ກ]ພຣະ
ກິດຕິຄຸນອັນເປັນນິດຂອງເຮົາ, ແລະ ເຮັດ
ພັນທະສັນຍາດ້ວຍພັນທະສັນຍາອັນເປັນ
ນິດ, ແລ້ວພວກເຂົາຖືກນັບວ່າເປັນ [ຂ]ເກືອ
ຂອງແຜ່ນດິນໂລກ ແລະ ເປັນລົດເຄັມຂອງ
ມະນຸດ;
40 ພວກ ເຂົາ ຖືກ ເອີ້ນ ໃຫ້ ເປັນ ລົດ ເຄັມ
ຂອງ ມະນຸດ; ສະນັ້ນ, ຖ້າຫາກ ເກືອຂອງ
ແຜ່ນ ດິນ ໂລກໝົດລົດ ເຄັມ ຂອງ ມັນ, ຈົ່ງ
ເບິ່ງ, ຕໍ່ຈາກນັ້ນໄປມັນບໍ່ມີປະໂຫຍດອັນ
ໃດເລີຍ, ແຕ່ຈະຖືກ ໂຍນຖິ້ມໃຫ້ຄົນຢຽບ
ຍ່ຳເທົ່ານັ້ນ.
41 ຈົ່ງ ເບິ່ງ, ນີ້ ຄື ບັນ ຍາ ກ່ຽວ ກັບ ລູກ
ຫລານ ຂອງ ຊີໂອນ, ແມ່ນແຕ່ຫລາຍຄົນ,
ແຕ່ບໍ່ ແມ່ນທັງໝົດ; ພວກ ເຂົາ ຖືກພົບວ່າ
ເປັນຜູ້ລ່ວງລະເມີດ, ສະນັ້ນ ພວກເຂົາຈຳ
ຕ້ອງຖືກ [ກ]ຕີສອນ—
42 ຄົນທີ່ [ກ]ຍົກຕົນເອງຂຶ້ນຈະຖືກເຮັດໃຫ້
ຕ່ຳລົງ, ແລະ ຄົນທີ່ [ຂ]ຖ່ອມຕົວ ຈະຖືກເຮັດ
ໃຫ້ສູງສົ່ງ.
43 ແລະ ບັດນີ້, ເຮົາຈະເລົ່າຄຳອຸປະມາ
ເລື່ອງໜຶ່ງໃຫ້ພວກເຈົ້າຟັງ, ເພື່ອວ່າພວກ
ເຈົ້າ ຈະ ຮູ້ຄວາມປະສົງ ຂອງ ເຮົາກ່ຽວ ກັບ
ການໄຖ່ຊີໂອນ.
44 [ກ]ເຈົ້ານາຍຄົນໜຶ່ງມີທີ່ດິນຢູ່ຕອນໜຶ່ງ
ທີ່ ດີ ເລີດ; ແລະ ລາວໄດ້ກ່າວກັບຄົນໃຊ້
ຂອງລາວວ່າ: ຈົ່ງໄປຍັງ [ຂ]ສວນອະງຸ່ນຂອງ
ເຮົາ, ແມ່ນແຕ່ໃນດິນບ່ອນທີ່ດີເລີດບ່ອນນີ້,
ແລະ ໃຫ້ປູກຕົ້ນໝາກກອກສິບສອງຕົ້ນ;
45 ແລະ ໃຫ້ ວາງ [ກ]ຄົນ ຍາມ ໄວ້ ໂດຍ
ຮອບ, ແລະ ສ້າງປ້ອມຍາມ, ເພື່ອວ່າຄົນ
ໜຶ່ງຈະສາມາດຫລຽວເຫັນທົ່ວທີ່ດິນບ່ອນ
ນັ້ນ, ເພື່ອເປັນຄົນຍາມຢູ່ເທິງປ້ອມຍາມ,
ເພື່ອວ່າຕົ້ນໝາກກອກຂອງເຮົາຈະບໍ່ຖືກ
ໂຄ່ນລົງ ເມື່ອສັດຕູມາເພື່ອທຳລາຍ ແລະ
ເອົາໝາກຜົນ ໄປ ຈາກ ສວນ ອະງຸ່ນ ຂອງ
ເຮົາ.
46 ບັດນີ້, ຄົນໃຊ້ຂອງເຈົ້ານາຍຄົນນັ້ນ
ໄດ້ອອກໄປ ແລະ ເຮັດດັ່ງທີ່ເຈົ້ານາຍຂອງ
ພວກເຂົາໄດ້ບັນຊາ, ແລະ ໄດ້ປູກຕົ້ນໝາກ
ກອກ, ແລະ ໄດ້ສ້າງຮົ້ວອ້ອມຕົ້ນໝາກ
ກອກໄວ້, ແລະ ໄດ້ຈັດໃຫ້ມີຄົນຍາມ, ແລະ
ໄດ້ເລີ່ມຕົ້ນສ້າງປ້ອມຍາມ.

36 *ກ* ຄມພ ຄວາມຕາຍ ທາງຮ່າງກາຍ.
*ຂ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
37 *ກ* ຄມພ ຈິດວິນຍານ.
38 *ກ* 2 ຂຄ 7:14; ຄພ 93:1.
*ຂ* ຄມພ ອົດທົນ, ຄວາມອົດທົນ.
39 *ກ* ຄມພ ພັນທະສັນຍາ ໃໝ່ ແລະ ເປັນນິດ.
*ຂ* ມທ 5:13; ຄພ 103:10.
41 *ກ* ຄມພ ຕີສອນ, ການຕີສອນ.
42 *ກ* ອບຢ 1:3–4; ລກ 14:11; ຣລມ 4:12–13.
*ຂ* ລກ 18:14. ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
44 *ກ* ຄພ 103:21–22.
*ຂ* ຄມພ ສວນອະງຸ່ນຂອງ ພຣະຜູ້ເປັນເຈົ້າ.
45 *ກ* ອຊກ 33:2, 7; 3 ນຟ 16:18. ຄມພ ຍາມ, ຄົນຍາມ.

47 ແລະ ໃນຂະນະທີ່ພວກເຂົາພວມວາງຮາກຖານຢູ່ນັ້ນ, ພວກເຂົາໄດ້ເລີ່ມຕົ້ນກ່າວໃນບັນດາພວກເຂົາເອງວ່າ: ແລະ ເປັນຫຍັງນາຍຂອງພວກເຮົາຈຶ່ງຕ້ອງການປ້ອມຍາມນີ້?

48 ແລະ ໄດ້ປຶກສາກັນເປັນເວລາດົນນານ, ໂດຍໄດ້ກ່າວໃນບັນດາພວກເຂົາເອງວ່າ: ເປັນຫຍັງນາຍຂອງພວກເຮົາຈຶ່ງຕ້ອງການປ້ອມຍາມນີ້, ໃນເມື່ອເຫັນໄດ້ວ່ານີ້ເປັນເວລາທີ່ສະຫງົບສຸກ?

49 ເງິນເຫລົ່ານີ້ຄວນເອົາໄປໄວ້ກັບຜູ້ແລກປ່ຽນບໍ່ແມ່ນບໍ? ເພາະບໍ່ມີຄວາມຕ້ອງການສິ່ງເຫລົ່ານີ້.

50 ແລະ ໃນຂະນະທີ່ພວກເຂົາຂັດແຍ້ງກັນຢູ່ນັ້ນ ພວກເຂົາກາຍເປັນຄົນກຽດຄ້ານ, ແລະ ພວກເຂົາບໍ່ໄດ້ເຊື່ອຟັງຕາມຄຳບັນຊາຂອງເຈົ້ານາຍຂອງພວກເຂົາ.

51 ແລະ ສັດຕູໄດ້ມາໃນຕອນກາງຄືນ, ແລະ ໄດ້ໂຄ່ນ [ກ]ຮົ້ວລົງ; ແລະ ຄົນໃຊ້ຂອງເຈົ້ານາຍໄດ້ຕື່ນຂຶ້ນ ແລະ ມີຄວາມຢ້ານກົວ, ແລະ ໄດ້ແລ່ນໜີໄປ; ແລະ ສັດຕູໄດ້ທຳລາຍວຽກງານຂອງພວກເຂົາ, ແລະ ໂຄ່ນຕົ້ນໝາກກອກລົງ.

52 ບັດນີ້, ຈົ່ງເບິ່ງ, ເຈົ້ານາຍ, ເຈົ້າຂອງສວນອະງຸ່ນ, ໄດ້ເອີ້ນຄົນໃຊ້ຂອງລາວມາ, ແລະ ໄດ້ກ່າວກັບພວກເຂົາວ່າ, ເປັນຫຍັງ! ແມ່ນຫຍັງທີ່ເປັນສາເຫດຂອງຄວາມຊົ່ວຮ້າຍອັນໃຫຍ່ຫລວງນີ້?

53 ພວກເຈົ້າບໍ່ຄວນບໍ ທີ່ຈະເຮັດດັ່ງທີ່ເຮົາໄດ້ບັນຊາພວກເຈົ້າ, ແລະ—ຫລັງຈາກພວກເຈົ້າໄດ້ປູກສວນອະງຸ່ນ, ແລະ ໄດ້ສ້າງຮົ້ວອ້ອມມັນແລ້ວ, ແລະ ໄດ້ຈັດໃຫ້ມີຄົນຍາມກຳແພງນັ້ນໄວ້—ທັງໄດ້ສ້າງປ້ອມຍາມນຳອີກ, ແລະ ໄດ້ຈັດໃຫ້ມີຄົນຍາມຢູ່ເທິງປ້ອມຍາມນັ້ນ, ແລະ ເຝົ້າຍາມສວນອະງຸ່ນຂອງເຮົາ, ແລະ ບໍ່ໃຫ້ເຊືອບຫລັບໄປ, ຖ້າບໍ່ດັ່ງນັ້ນ ສັດຕູຈະມາໂຈມຕີພວກເຈົ້າ?

54 ແລະ ຈົ່ງເບິ່ງ, ຄົນຍາມຢູ່ເທິງປ້ອມຍາມຕ້ອງຫລຽວເຫັນສັດຕູໃນຂະນະທີ່ເຂົາຍັງຢູ່ໄກ; ແລະ ເມື່ອນັ້ນພວກເຈົ້າຈະໄດ້ຕຽມພ້ອມ ແລະ ບໍ່ໃຫ້ສັດຕູໂຄ່ນຮົ້ວນັ້ນລົງ, ແລະ ຮັກສາສວນອະງຸ່ນຂອງເຮົາຈາກເງື້ອມມືຂອງຜູ້ທຳລາຍ.

55 ແລະ ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ຄົນໜຶ່ງຂອງລາວວ່າ: ຈົ່ງໄປ ແລະ ເຕົ້າໂຮມຄົນໃຊ້ທີ່ເຫລືອຢູ່ຂອງເຮົາ, ແລະ ນຳກຳລັງ [ກ]ທັງໝົດຂອງຄົວເຮືອນຂອງເຮົາໄປ, ຊຶ່ງຄືນັກຮົບຂອງເຮົາ, ຊາຍໜຸ່ມຂອງເຮົາ, ແລະ ຄົນໃນໄວກາງອາຍຸນຳອີກໃນບັນດາຄົນໃຊ້ທັງໝົດຂອງເຮົາ, ຜູ້ເປັນກຳລັງຂອງຄົວເຮືອນຂອງເຮົາ, ຍົກເວັ້ນແຕ່ຄົນເຫລົ່ານັ້ນຜູ້ທີ່ເຮົາໄດ້ກຳນົດໃຫ້ຢູ່ຕໍ່ໄປ;

56 ແລະ ໃຫ້ພວກເຈົ້າໄປຍັງທີ່ດິນສວນອະງຸ່ນຂອງເຮົາທັນທີ, ແລະ ໄຖ່ສວນອະງຸ່ນຂອງເຮົາ; ເພາະມັນເປັນຂອງເຮົາ; ເຮົາໄດ້ຊື້ມັນມາດ້ວຍເງິນ.

57 ສະນັ້ນ, ພວກເຈົ້າຈົ່ງເຂົ້າໄປຫາທີ່ດິນຂອງເຮົາທັນທີ; ໃຫ້ພັງກຳແພງຂອງສັດຕູຂອງເຮົາ; ທຳລາຍປ້ອມຍາມຂອງພວກເຂົາລົງ, ແລະ ເຮັດໃຫ້ຄົນຍາມຂອງພວກເຂົາແຕກກະຈັດກະຈາຍໄປ.

58 ແລະ ຕາບໃດທີ່ພວກເຂົາຮວມຕົວກັນຕໍ່ສູ້ພວກເຈົ້າ, ຈົ່ງ [ກ]ແກ້ແຄ້ນສັດຕູຂອງເຮົາໃຫ້ເຮົາ, ເພື່ອວ່າໃນບໍ່ດົນເຮົາຈະມາ

51 *ກ* ອຂຢ 5:1–7.
55 *ກ* ຄພ 103:22, 29–30; 105:16, 29–30.
58 *ກ* ຄພ 97:22–24; 105:15.

ພ້ອມກັບພວກທີ່ເຫລືອຢູ່ໃນບ້ານຂອງເຮົາ
ແລະ ຄອບຄອງທີ່ດິນ.
59 ແລະ ຄົນ ໃຊ້ ໄດ້ ກ່າວ ກັບ ເຈົ້າ ນາຍ
ຂອງເຂົາວ່າ: ເມື່ອໃດສິ່ງເຫລົ່ານີ້ຈະເກີດ
ຂຶ້ນ?
60 ແລະ ລາວ ໄດ້ ກ່າວ ກັບ ຄົນ ໃຊ້ ຂອງ
ລາວ ວ່າ: ເມື່ອເຮົາປະສົງ; ເຈົ້າຈົ່ງ ໄປທັນ
ທີ ແລະ ເຮັດທຸກສິ່ງທັງປວງ ບໍ່ວ່າອັນໃດກໍ
ຕາມທີ່ເຮົາໄດ້ບັນຊາເຈົ້າ;
61 ແລະ ນີ້ຈະເປັນຕາປະທັບ ແລະ ເປັນ
ພອນ ເທິງເຈົ້າ—ຜູ້ ພິ ທັກຮັກສາທີ່ຊື່ສັດ
ແລະ [ກ]ສະຫລາດ ໃນທ່າມກາງບ້ານຂອງ
ເຮົາ, [ຂ]ຜູ້ປົກຄອງໃນອານາຈັກຂອງເຮົາ.
62 ແລະ ຄົນໃຊ້ຂອງລາວ ໄດ້ອອກໄປ
ທັນທີ, ແລະ ໄດ້ເຮັດທຸກສິ່ງທັງປວງ ບໍ່ວ່າ
ອັນໃດກໍຕາມທີ່ເຈົ້ານາຍຂອງເຂົາໄດ້ບັນ
ຊາເຂົາ; ແລະ [ກ]ຫລັງຈາກຫລາຍວັນ ທຸກ
ສິ່ງທັງປວງຍ່ອມສຳເລັດ.
63 ອີກ ເທື່ອໜຶ່ງ, ຕາມຄວາມ ຈິງ ແລ້ວ
ເຮົາກ່າວກັບພວກເຈົ້າວ່າ ເຮົາຈະສະແດງ
ຄວາມສະຫລຽວສະຫລາດຂອງເຮົາໃຫ້
ພວກເຈົ້າເຫັນກ່ຽວກັບໜ່ວຍທັງໝົດຂອງ
ສາດສະໜາຈັກ, ຕາບໃດທີ່ພວກເຂົາເຕັມ
ໃຈຮັບການແນະນຳໃນວິທີທີ່ຖືກຕ້ອງ ແລະ
ເໝາະສົມສຳລັບຄວາມລອດຂອງພວກ
ເຂົາ—
64 ເພື່ອວ່າວຽກງານແຫ່ງການເຕົ້າໂຮມ
ໄພ່ພົນຂອງເຮົາຈະສືບຕໍ່ໄປ, ເພື່ອວ່າເຮົາ
ຈະໄດ້ສ້າງພວກເຂົາຂຶ້ນສຳລັບນາມຂອງ
ເຮົາໃນ [ກ]ບ່ອນທີ່ສັກສິດ; ເພາະເວລາແຫ່ງ
[ຂ]ການເກັບກ່ຽວມາເຖິງແລ້ວ, ແລະ ຄຳ
ຂອງເຮົາຈຳເປັນຕ້ອງ [ຄ]ສຳເລັດຄົບຖ້ວນ.
65 ສະນັ້ນ, ເຮົາຕ້ອງເຕົ້າໂຮມຜູ້ຄົນຂອງ
ເຮົາ, ຕາມຄຳອຸປະມາເລື່ອງເຂົ້າເປືອກ
ແລະ [ກ]ເຂົ້ານົກ, ເພື່ອວ່າເຂົ້າເປືອກຈະຖືກ
ເກັບໄວ້ຢູ່ໃນສາງເພື່ອຈະໄດ້ມີຊີວິດນິລັນ
ດອນ, ແລະ ໄດ້ຮັບການສວມມົງກຸດ ດ້ວຍ
ລັດສະໝີພາບຂອງ [ຂ]ຊັ້ນສູງ, ເມື່ອເຮົາຈະ
ມາໃນອານາຈັກຂອງພຣະບິດາຂອງເຮົາ
ເພື່ອມອບລາງວັນໃຫ້ແກ່ທຸກໆຄົນຕາມທີ່
ວຽກງານຂອງເຂົາຈະເປັນໄປ;
66 ໃນຂະນະທີ່ເຂົ້ານົກຈະຖືກເຕົ້າໂຮມ
ໄວ້ເປັນມັດໆ, ແລະ ສາຍຮັດຂອງມັນຖືກ
ເຮັດໃຫ້ແໜ້ນໜາ, ເພື່ອວ່າມັນຈະຖືກ
[ກ]ເຜົາດ້ວຍໄຟທີ່ບໍ່ຮູ້ມອດ.
67 ສະນັ້ນ, ເຮົາຈະມອບບັນຍັດຂໍ້ໜຶ່ງ
ໃຫ້ແກ່ໜ່ວຍທັງໝົດຂອງສາດສະໜາຈັກ,
ວ່າພວກເຂົາຈະມາເຕົ້າໂຮມກັນຕໍ່ໄປຢູ່ໃນ
ສະຖານທີ່ ທີ່ເຮົາໄດ້ກຳນົດໄວ້.
68 ເຖິງຢ່າງໃດກໍຕາມ, ດັ່ງທີ່ເຮົາໄດ້ກ່າວ
ກັບພວກເຈົ້າໃນບັນຍັດຂໍ້ທີ່ຜ່ານມາ, ຢ່າ
ໃຫ້ການ [ກ]ເຕົ້າໂຮມຂອງພວກເຈົ້າເປັນໄປ
ຢ່າງຟ້າວຟັ່ງ, ຫລື ປົບໜີໄປ; ແຕ່ໃຫ້ທຸກສິ່ງ
ທັງປວງຖືກຈັດຕຽມໄວ້ກ່ອນໜ້າພວກເຈົ້າ.
69 ແລະ ເພື່ອໃຫ້ທຸກສິ່ງທັງປວງຖືກຈັດ
ຕຽມໄວ້ກ່ອນໜ້າພວກເຈົ້າ, ຈົ່ງຍຶດຖືບັນ
ຍັດທີ່ເຮົາໄດ້ມອບໃຫ້ກ່ຽວກັບສິ່ງເຫລົ່າ
ນີ້—
70 ຊຶ່ງກ່າວ, ຫລື ສິດສອນ, ໃຫ້ [ກ]ຊື້ທີ່ດິນ
ທັງໝົດດ້ວຍເງິນ, ຊຶ່ງສາມາດຊື້ໄດ້ດ້ວຍ
ເງິນ, ໃນພາກພື້ນທີ່ອ້ອມຮອບ ຊຶ່ງເຮົາໄດ້
ກຳນົດໄວ້ໃຫ້ເປັນແຜ່ນດິນຊີໂອນ, ເພື່ອ

61 *ກ* ຄພ 78:22.
*ຂ* ມທ 25:20–23.
62 *ກ* ຄພ 105:37.
64 *ກ* ຄພ 87:8.
*ຂ* ຄພ 33:3, 7.
ຄມພ ເກັບກ່ຽວ.
*ຄ* ຄພ 1:38.
65 *ກ* ມທ 13:6–43;
ຄພ 86:1–7.
*ຂ* ຄມພ ລັດສະໝີພາບ
ຂອງຊັ້ນສູງ.
66 *ກ* ນຮ 1:5; ມທ 3:12;
ຄພ 38:12; 63:33–34.
68 *ກ* ຄພ 58:56.
70 *ກ* ຄພ 63:27–29.

ການ ເລີ່ມ ຕົ້ນ ຂອງ ການ ເຕົ້າ ໂຮມ ໄພ່ ພົນ
ຂອງເຮົາ;
71 ທີ່ດິນທັງໝົດຊຶ່ງສາມາດຊື້ໄດ້ໃນເຂດ
ແຈັກສັນ, ແລະ ໃນເຂດອ້ອມແອ້ມ, ແລະ
ປ່ອຍສ່ວນທີ່ເຫລືອຢູ່ໄວ້ໃນມືຂອງເຮົາ.
72 ບັດນີ້, ຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ໃຫ້ໜ່ວຍທັງໝົດຂອງ
ສາດສະໜາຈັກຮິບໂຮມ ເງິນທັງໝົດຂອງ
ພວກເຂົາເຂົ້າກັນ; ໃຫ້ສິ່ງເຫລົ່ານີ້ເປັນໄປ
ຕາມເວລາທີ່ເໝາະສົມ, ແຕ່ບໍ່ແມ່ນຢ່າງ
[ກ]ຟ້າວຟັ່ງ; ແລະ ໃຫ້ເບິ່ງວ່າທຸກສິ່ງທັງປວງ
ຖືກຈັດຕຽມໄວ້ກ່ອນໜ້າພວກເຈົ້າ.
73 ແລະ ໃຫ້ກຳນົດຊາຍທີ່ໜ້າຍົກຍ້ອງ,
ແມ່ນແຕ່ຄົນສະຫລາດ, ແລະ ສົ່ງພວກເຂົາ
ໄປຊື້ທີ່ດິນເຫລົ່ານັ້ນ.
74 ແລະ ໜ່ວຍຕ່າງໆຂອງສາດສະໜາ
ຈັກ ໃນ ດິນ ແດນ ທາງ ພາກ ຕາເວັນອອກ,
ເມື່ອມັນຖືກສ້າງຂຶ້ນ, ຖ້າຫາກພວກເຂົາຈະ
ເຊື່ອຟັງຄຳແນະນຳນີ້ ພວກເຂົາຈະຊື້ທີ່ດິນ
ແລະ ມາເຕົ້າໂຮມກັນຢູ່ທີ່ນັ້ນ; ແລະ ໃນວິທີ
ນີ້ພວກເຂົາຈະໄດ້ສະຖາປະນາຊີໂອນຂຶ້ນ.
75 ເຖິງແມ່ນແຕ່ຕອນນີ້ກໍມີພຽງພໍແລ້ວ
ທີ່ຈະສະສົມໄວ້, ແທ້ຈິງແລ້ວ, ແມ່ນແຕ່ມີ
ຢ່າງຫລວງຫລາຍ, ທີ່ຈະໄຖ່ຊີໂອນ, ແລະ
ສະຖາປະນາແຜ່ນດິນທີ່ຮົກຮ້າງຂອງນາງ,
ທີ່ຈະບໍ່ຖືກໂຄ່ນລົງອີກ, ຖ້າຫາກໜ່ວຍ
ຕ່າງໆຂອງສາດສະໜາຈັກ, ຜູ້ເອີ້ນຕົນເອງ
ຕາມນາມຂອງເຮົາ, [ກ]ເຕັມໃຈເຊື່ອຟັງສຽງ
ຂອງເຮົາ.
76 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າວ່າ ຜູ້ທີ່ຖືກສັດຕູຂອງພວກເຂົາເຮັດ
ໃຫ້ກະຈັດກະຈາຍໄປ, ມັນເປັນຄວາມ
ປະສົງຂອງເຮົາທີ່ພວກເຂົາຈະຮ້ອງຂໍໃຫ້ມີ
ການຊົດໃຊ້, ແລະ ການໄຖ່, ໂດຍມືຂອງ
ຄົນເຫລົ່ານັ້ນທີ່ໄດ້ຮັບການແຕ່ງຕັ້ງໃຫ້ເປັນ
ຜູ້ປົກຄອງ ແລະ ມີສິດອຳນາດເໜືອພວກ
ເຈົ້າ—
77 ຕາມກົດ ແລະ [ກ]ລັດຖະທຳມະນູນ
ຂອງຜູ້ຄົນ, ຊຶ່ງເຮົາໄດ້ຍອມໃຫ້ຖືກຈັດຕັ້ງ
ຂຶ້ນ, ແລະ ຄວນຖືກຮັກສາໄວ້ເພື່ອ [ຂ]ສິດທິ
ແລະ ການຄຸ້ມຄອງເນື້ອໜັງທັງປວງ, ຕາມ
ຫລັກທຳທີ່ທ່ຽງທຳ ແລະ ສັກສິດ;
78 ເພື່ອວ່າມະນຸດທຸກໆຄົນຈະໄດ້ກະທຳ
ໃນຄຳສອນ ແລະ ຫລັກທຳກ່ຽວກັບອະນາ
ຄົດ, ຕາມ [ກ]ອຳເພີໃຈອັນຊອບທຳ ຊຶ່ງເຮົາ
ໄດ້ມອບໃຫ້ແກ່ເຂົາ, ເພື່ອວ່າມະນຸດທຸກ
ຄົນຈະ [ຂ]ຮັບຜິດຊອບຕໍ່ບາບຂອງຕົນເອງ
ໃນວັນແຫ່ງ [ຄ]ການພິພາກສາ.
79 ສະນັ້ນ, ມັນຈຶ່ງບໍ່ຖືກຕ້ອງທີ່ມະນຸດ
ຄົນໃດຈະຢູ່ໃນຄວາມເປັນທາດຂອງຄົນ
ອື່ນ.
80 ແລະ ເພື່ອຈຸດປະສົງນີ້ ເຮົາຈຶ່ງໄດ້ຈັດ
ຕັ້ງກົດ [ກ]ລັດຖະທຳມະນູນຂອງແຜ່ນດິນນີ້,
ໂດຍມືຂອງຄົນທີ່ສະຫລາດ ຊຶ່ງເຮົາໄດ້ຍົກ
ຂຶ້ນເພື່ອຈຸດປະສົງນີ້ເອງ, ແລະ ໄດ້ໄຖ່ແຜ່ນ
ດິນໂດຍ [ຂ]ການນອງເລືອດ.
81 ບັດນີ້, ເຮົາຈະປຽບທຽບລູກຫລານ
ຂອງຊີໂອນໃສ່ກັບສິ່ງໃດ? ເຮົາຈະປຽບ
ທຽບພວກເຂົາໃສ່ກັບ [ກ]ຄຳອຸປະມາເລື່ອງ
ຍິງຄົນໜຶ່ງ ແລະ ຜູ້ຕັດສິນທີ່ບໍ່ທ່ຽງທຳ,
ເພາະມະນຸດຄວນ [ຂ]ອະທິຖານສະເໝີ ແລະ
ບໍ່ທໍ້ຖອຍ, ຊຶ່ງ ກ່າວວ່າ—

72 *ກ* ອຊຢ 52:10–12.
75 *ກ* ແອວ 5:37–39.
77 *ກ* ຄມພ ປົກຄອງ, ການປົກຄອງ.
*ຂ* ຄມພ ເສລີພາບ.
78 *ກ* ຄມພ ອຳເພີໃຈ.
*ຂ* ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
*ຄ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
80 *ກ* 2 ນຟ 1:7–9; ຄພ 98:5–6. ຄມພ ລັດຖະທຳມະນູນ.
*ຂ* 1 ນຟ 13:13–19.
81 *ກ* ລກ 18:1–8.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

82 ໃນເມືອງໜຶ່ງມີຜູ້ຕັດສິນຄົນໜຶ່ງທີ່ບໍ່
ຢ້ານກົວພຣະເຈົ້າ, ທັງບໍ່ເຫັນແກ່ມະນຸດ.
83 ແລະ ມີແມ່ໝ້າຍຄົນໜຶ່ງຢູ່ໃນເມືອງ
ນັ້ນ, ແລະ ນາງໄດ້ມາຫາລາວ, ໂດຍກ່າວ
ວ່າ: ຂໍໃຫ້ແກ້ແຄ້ນສັດຕູໃຫ້ຂ້ານ້ອຍແດ່.
84 ແລະ ລາວບໍ່ຍອມເຮັດສິ່ງໃດຊົ່ວໄລ
ຍະໜຶ່ງ, ແຕ່ຕໍ່ມາລາວໄດ້ກ່າວຢູ່ໃນໃຈວ່າ:
ເຖິງແມ່ນວ່າເຮົາບໍ່ຢ້ານກົວພຣະເຈົ້າ, ຫລື
ບໍ່ເຫັນແກ່ມະນຸດ, ແຕ່ເພາະແມ່ໝ້າຍຄົນ
ນີ້ໄດ້ມາລົບກວນເຮົາ, ເຮົາຈຶ່ງຈະແກ້ແຄ້ນ
ໃຫ້ນາງ, ຖ້າບໍ່ດັ່ງນັ້ນ ນາງຈະທຽວກັບມາ
ລົບກວນເຮົາອີກບໍ່ເລີກບໍ່ແລ້ວ.
85 ເຮົາຈະປຽບທຽບ ລູກຫລານຂອງ
ຊີໂອນດັ່ງນັ້ນ.
86 ໃຫ້ພວກເຂົາຮ້ອງຂໍຢູ່ທີ່ຕີນຂອງຜູ້ຕັດ
ສິນ;
87 ແລະ ຖ້າຫາກລາວບໍ່ຟັງພວກເຂົາ,
ໃຫ້ພວກເຂົາຮ້ອງຂໍຢູ່ທີ່ຕີນຂອງເຈົ້າລັດ;
88 ແລະ ຖ້າຫາກເຈົ້າລັດບໍ່ຟັງພວກເຂົາ,
ໃຫ້ພວກເຂົາຮ້ອງຂໍຢູ່ທີ່ຕີນຂອງປະທານາ
ທິບໍດີ;
89 ແລະ ຖ້າຫາກປະທານາທິບໍດີບໍ່ຟັງ
ພວກເຂົາ, ຈາກນັ້ນພຣະຜູ້ເປັນເຈົ້າຈະລຸກ
ຂຶ້ນ ແລະ ສະເດັດອອກມາຈາກ [ກ]ບ່ອນລີ້
ລັບຂອງພຣະອົງ, ແລະ ໃນຄວາມໂມໂຫ
ຂອງພຣະອົງ, ພຣະອົງຈະລົບກວນປະຊາ
ຊາດ;
90 ແລະ ໃນ ຄວາມ ບໍ່ ພໍ ພຣະ ໄທ ອັນ
ເດືອດດານຂອງພຣະອົງ, ແລະ ໃນຄວາມ
ພຣະພິໂລດອັນຮຸນແຮງຂອງພຣະອົງ, ໃນ
ວັນເວລາຂອງພຣະອົງ, ຈະຕັດ [ກ]ຜູ້ພິທັກ
ຮັກສາທີ່ຊົ່ວຮ້າຍ, ທີ່ບໍ່ຊື່ສັດ, ແລະ ທີ່ບໍ່
ທ່ຽງທຳ ເຫລົ່ານັ້ນອອກ, ແລະ ກຳນົດພາກ
ສ່ວນທີ່ເປັນຂອງພວກເຂົາໃຫ້ແກ່ພວກເຂົາ
ໃນບັນດາຄົນໜ້າຊື່ໃຈຄົດ, ແລະ [ຂ]ຜູ້ທີ່ບໍ່
ເຊື່ອຖື;
91 ແມ່ນ ແຕ່ ໃນ ຄວາມ ມືດ ພາຍ ນອກ,
ບ່ອນທີ່ມີ [ກ]ການຮ້ອງໄຫ້, ແລະ ການຄວນ
ຄາງ, ແລະ ການຂົບແຂ້ວຄ້ຽວຟັນ.
92 ສະນັ້ນ ພວກເຈົ້າຈົ່ງອະທິຖານ, ເພື່ອ
ວ່າຫູຂອງພວກເຂົາຈະເປີດຟັງສຽງຮ້ອງ
ຂອງພວກເຈົ້າ, ເພື່ອວ່າເຮົາຈະ [ກ]ເມດຕາ
ພວກເຂົາ, ເພື່ອວ່າສິ່ງເຫລົ່ານີ້ຈະບໍ່ມາສູ່
ພວກເຂົາ.
93 ສິ່ງ ໃດ ທີ່ ເຮົາ ໄດ້ ກ່າວ ກັບ ພວກ ເຈົ້າ
ຈະຕ້ອງເກີດຂຶ້ນ, ເພື່ອວ່າມະນຸດທັງປວງ
ຈະບໍ່ຖືກປະໄວ້ໂດຍບໍ່ມີ [ກ]ຂໍ້ແກ້ຕົວ;
94 ເພື່ອວ່າຄົນທີ່ສະຫລາດ ແລະ ຜູ້ປົກ
ຄອງຈະໄດ້ຍິນ ແລະ ຮູ້ຈັກສິ່ງທີ່ພວກເຂົາ
ບໍ່ເຄີຍ [ກ]ພິຈາລະນາ;
95 ເພື່ອວ່າເຮົາຈະໄດ້ເລີ່ມນຳການກະ
ທຳຂອງເຮົາ, [ກ]ການກະທຳທີ່ແປກໆຂອງ
ເຮົາອອກມາ, ແລະ ເຮັດວຽກງານຂອງ
ເຮົາ, ວຽກງານທີ່ແປກໆຂອງເຮົາ, ເພື່ອ
ວ່າມະນຸດຈະ [ຂ]ຫລິງເຫັນຄວາມແຕກຕ່າງ
ລະຫວ່າງຄວາມຊອບທຳ ແລະ ຄົນຊົ່ວ,
ພຣະເຈົ້າຂອງພວກເຈົ້າໄດ້ກ່າວ.
96 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ, ມັນເປັນການກົງກັນຂ້າມກັບບັນ
ຍັດຂອງເຮົາ ແລະ ຄວາມປະສົງຂອງເຮົາ

89 *ກ* ອຊຢ 45:15; ຄພ 121:1, 4; 123:6.
90 *ກ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
*ຂ* ພນມ 21:8. ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
91 *ກ* ມທ 25:30; ຄພ 19:5; 29:15–17; 124:8.
92 *ກ* ຄມພ ເມດຕາ, ມີເມດຕາ, ຄວາມເມດຕາ.
93 *ກ* ຣມ 1:18–21.
94 *ກ* ອຊຢ 52:15; 3 ນຟ 20:45; 21:8.
95 *ກ* ອຊຢ 28:21; ຄພ 95:4.
*ຂ* ມລກ 3:18. ຄມພ ການສາມາດສັງເກດ, ຂອງປະທານແຫ່ງ.

ທີ່ຜູ້ຮັບໃຊ້ຂອງເຮົາ ຊິດນີ ກຽວເບີດ ຈະ ຂາຍ [ກ]ຄັງຂອງເຮົາ, ຊຶ່ງເຮົາໄດ້ກຳນົດໄວ້ ໃຫ້ຜູ້ຄົນຂອງເຮົາ, ໃຫ້ຢູ່ໃນກຳມືຂອງສັດຕູ ຂອງເຮົາ.

97 ຢ່າໃຫ້ສິ່ງທີ່ເຮົາໄດ້ກຳນົດໄວ້ມີມົນ ທິນ ໂດຍ ສັດຕູຂອງເຮົາ, ໂດຍການ ຍິນ ຍອມຂອງຜູ້ທີ່ [ກ]ເອີ້ນຕົນເອງຕາມນາມຂອງ ເຮົາ;

98 ເພາະນີ້ຄືບາບທີ່ສາຫັດ ແລະ ຮ້າຍ ແຮງຕໍ່ຕ້ານເຮົາ, ແລະ ຕໍ່ຕ້ານຜູ້ຄົນຂອງ ເຮົາ, ເນື່ອງຈາກສິ່ງເຫລົ່ານັ້ນຊຶ່ງເຮົາໄດ້ ອອກຄຳສັ່ງ ແລະ ຊຶ່ງຈະເກີດກັບປະຊາ ຊາດຕ່າງໆໃນບໍ່ດົນນີ້.

99 ສະນັ້ນ, ມັນເປັນຄວາມປະສົງຂອງ ເຮົາທີ່ຜູ້ຄົນຂອງເຮົາຄວນອ້າງສິດ, ແລະ ຖືສິດກັບສິ່ງທີ່ເຮົາໄດ້ກຳນົດໄວ້ໃຫ້ພວກ ເຂົາ, ເຖິງແມ່ນວ່າພວກເຂົາຈະບໍ່ໄດ້ຮັບອະ ນຸຍາດໃຫ້ອາໄສຢູ່ທີ່ນັ້ນ.

100 ເຖິງຢ່າງໃດກໍຕາມ, ເຮົາບໍ່ໄດ້ກ່າວ ວ່າ ພວກເຂົາບໍ່ຄວນອາໄສຢູ່ທີ່ນັ້ນ; ເພາະ ຕາບໃດທີ່ພວກເຂົາຍັງນຳໝາກຜົນທີ່ດີ ແລະ ວຽກງານທີ່ເໝາະສົມກັບອານາຈັກ ຂອງເຮົາອອກມາ, ພວກເຂົາຈະອາໄສຢູ່ທີ່ ນັ້ນ.

101 ພວກເຂົາຈະສ້າງ, ແລະ ຄົນອື່ນຈະ ຮັບມັນເປັນ [ກ]ມູນມໍລະດົກບໍ່ໄດ້; ພວກເຂົາ ຈະປູກສວນອະງຸ່ນ, ແລະ ພວກເຂົາຈະກິນ ໝາກຜົນຈາກສວນນັ້ນ. ແມ່ນເປັນດັ່ງນັ້ນ. ອາແມນ.

## ພາກທີ 102

*ບັນທຶກການຈັດຕັ້ງສະພາສູງຊຸດທຳອິດຂອງສາດສະໜາຈັກ, ທີ່ເມືອງເຄີດແລນ, ລັດໂອ ໄຮໂອ, ວັນທີ 17 ເດືອນກຸມພາ, 1834. ຕົ້ນສະບັບຂອງບັນທຶກນີ້ແມ່ນຖືກບັນທຶກໂດຍ ແອວເດີ ອໍລິເວີ ຄາວເດີຣີ ແລະ ອໍສັນ ຮາຍດ໌. ສາດສະດາໄດ້ດັດແປງບັນທຶກໃນມື້ຕໍ່ມາ, ແລະ ໜຶ່ງມື້ຈາກນັ້ນ ບັນທຶກທີ່ຖືກດັດແປງແລ້ວ ໄດ້ຖືກຮັບຮູ້ຢ່າງເປັນເອກະສັນ ໂດຍ ສະພາສູງ ວ່າເປັນ "ລະບຽບການ ແລະ ກົດລັດຖະທຳມະນູນຂອງສະພາສູງ" ຂອງສາດ ສະໜາຈັກ. ຂໍ້ທີ 30 ຈົນເຖິງ 32, ໂດຍທີ່ມີສ່ວນກ່ຽວຂ້ອງກັບສະພາອັກຄະສາວົກສິບສອງ, ໄດ້ຖືກຕື່ມໃສ່ໃນປີ 1835 ພາຍໃຕ້ການຊີ້ນຳຂອງໂຈເຊັບ ສະມິດ ຕອນພາກນີ້ໄດ້ຖືກຈັດ ຕຽມ ສຳລັບການພິມໃນຄຳສອນ ແລະ ພັນທະສັນຍາ.*

*1–8, ສະພາສູງໄດ້ຖືກແຕ່ງຕັ້ງໄວ້ເພື່ອໃຫ້ ແກ້ໄຂບັນຫາທີ່ສຳຄັນຊຶ່ງເກີດຂຶ້ນໃນສາດ ສະໜາຈັກ; 9–18, ລະບຽບການ ໄດ້ຖືກ ມອບໃຫ້ສຳລັບການພິຈາລະນາຄະດີ; 19–23, ປະທານສະພາເປັນຜູ້ຕັດສິນ; 24–34, ລະບຽບການອຸທອນໄດ້ຖືກຈັດຕັ້ງໄວ້.*

1 ວັນນີ້ສະພາໃຫຍ່ຂອງມະຫາປະໂລ ຫິດຊາວສີ່ຄົນ ໄດ້ມາຊຸມນຸມກັນຢູ່ເຮືອນ ຂອງໂຈເຊັບ ສະມິດ, ຜູ້ລູກ, ໂດຍການເປີດ ເຜີຍ, ແລະ ໄດ້ເລີ່ມຕົ້ນຈັດຕັ້ງ [ກ]ສະພາສູງ ຂອງສາດສະໜາຈັກຂອງພຣະຄຣິດ, ຊຶ່ງ ປະກອບດ້ວຍມະຫາປະໂລຫິດສິບສອງ

96 *ກ* ຄມພ ຄັງ.
97 *ກ* ຄພ 103:4; 112:25–26; 125:2.
101 *ກ* ອຊຢ 65:21–22. ຄມພ ພັນປີ.
**102** 1 *ກ* ຄມພ ສະພາສູງ.

ຄົນ, ແລະ ປະທານໜຶ່ງ ຫລື ສາມຄົນຕາມ
ແຕ່ຄວາມຈຳເປັນຂອງຄະດີ.
2 ສະພາສູງໄດ້ຖືກແຕ່ງຕັ້ງໄວ້ໂດຍການ
ເປີດ ເຜີຍ ເພື່ອ ຈຸດປະສົງ ໃນການ ແກ້ໄຂ
ບັນຫາທີ່ສຳຄັນຊຶ່ງອາດ ເກີດຂຶ້ນ ໃນສາດ
ສະໜາຈັກ, ຊຶ່ງທາງສາດສະໜາຈັກ ຫລື
ສະພາ [ກ]ຂອງອະທິການບໍ່ສາມາດແກ້ໄຂ
ໄດ້ ເພື່ອໃຫ້ເປັນທີ່ພໍໃຈຕໍ່ຝ່າຍຕ່າງໆ.
3 ໂຈເຊັບ ສະມິດ, ຜູ້ລູກ, ຊິດນີ ຣິກດອນ
ແລະ ເຟຣ໌ເດຣິກ ຈີ ວິວລຽມສ໌ ໄດ້ຖືກ
ຮັບຮູ້ເປັນປະທານ ໂດຍສຽງຂອງສະພາ;
ແລະ ໂຈເຊັບ ສະມິດ, ຜູ້ພໍ່, ຈອນ ສະມິດ,
ໂຈເຊັບ ໂຄ, ຈອນ ຈອນສັນ, ມາຕິນ
ແຮຣິສ, ຈອນ ແອັສ ຄາດເທີ, ແຈເຣັດ
ຄາດເທີ, ອໍລີເວີ ຄາວເດີຣີ, ແຊມໂຍ ເອັຈ
ສະມິດ, ອໍສັນ ຮາຍດ໌, ຊຽວເວສ໌ເຕີ ສະມິດ,
ແລະ ລຸກ ຈອນສັນ, ຜູ້ຊຶ່ງເປັນມະຫາປະ
ໂລຫິດ, ໄດ້ຖືກເລືອກໃຫ້ເປັນສະພາແກ່
ສາດສະໜາຈັກ, ໂດຍສຽງທີ່ເປັນເອກະ
ສັນຂອງສະພາ.
4 ສະມາ ຊິກ ສະພາ ທີ່ ກ່າວ ເຖິງ ຢູ່ ຂ້າງ
ເທິງນັ້ນ ໄດ້ຖືກຖາມວ່າ ເຂົາເຈົ້າຈະຮັບ
ເອົາການມອບໝາຍຫລືບໍ່, ແລະ ເຂົາເຈົ້າ
ຈະປະຕິບັດໜ້າທີ່ນັ້ນອີງຕາມກົດຂອງ
ສະຫວັນຫລືບໍ່, ຊຶ່ງທຸກຄົນເຫລົ່ານັ້ນກໍໄດ້
ຕອບວ່າ ເຂົາເຈົ້າຈະຮັບ ເອົາການມອບ
ໝາຍຂອງຕົນ, ແລະ ຈະເຮັດໜ້າທີ່ຂອງ
ຕົນ ຕາມພຣະຄຸນຂອງພຣະເຈົ້າທີ່ໄດ້
ປະທານໃຫ້ແກ່ເຂົາເຈົ້າ.
5 ຈຳນວນ ຄົນທີ່ປະກອບ ເປັນ ສະພາ,
ຜູ້ອອກສຽງໃນນາມ ແລະ ເພື່ອສາດສະ
ໜາຈັກໃນການແຕ່ງຕັ້ງສະມາຊິກທີ່ກ່າວ
ເຖິງຂ້າງເທິງມີສີ່ສິບສາມຄົນ, ດັ່ງຕໍ່ໄປນີ້:
ມະຫາປະໂລຫິດເກົ້າຄົນ, ແອວເດີສິບເຈັດ
ຄົນ, ປະໂລຫິດສີ່ຄົນ, ແລະ ສະມາຊິກສິບ
ສາມຄົນ.
6 ໄດ້ ອອກ ສຽງ: ວ່າ ສະພາ ສູງ ຈະ ບໍ່ ມີ
ອຳນາດ ທີ່ຈະກະທຳປາດສະຈາກສະມາ
ຊິກເຈັດຄົນທີ່ກ່າວເຖິງຢູ່ຂ້າງເທິງ, ຫລື ຜູ້
ສືບຕໍ່ຕຳແໜ່ງແທນເຂົາເຈົ້າຢ່າງຖືກຕ້ອງຢູ່
ທີ່ນັ້ນ.
7 ເຈັດ ຄົນ ນີ້ ມີ ອຳນາດ ທີ່ ຈະ ແຕ່ງ ຕັ້ງ
ມະຫາປະໂລຫິດຄົນອື່ນໆ, ຜູ້ຊຶ່ງເຂົາເຈົ້າ
ອາດພິຈາລະນາວ່າມີຄ່າຄວນພໍ ແລະ ສາ
ມາດເຮັດໜ້າທີ່ແທນສະມາຊິກທີ່ບໍ່ຢູ່ນັ້ນ.
8 ໄດ້ອອກສຽງ: ວ່າເມື່ອໃດກໍຕາມທີ່ມີ
ຕຳແໜ່ງວ່າງເນື່ອງດ້ວຍການເຖິງແກ່ກຳ,
ການປົດອອກຈາກໜ້າທີ່ເພາະການລ່ວງ
ລະເມີດ, ຫລື ການຍ້າຍອອກຈາກເຂດປົກ
ຄອງຂອງສາດສະໜາຈັກ, ຂອງສະມາຊິກ
ຄົນໃດທີ່ກ່າວເຖິງຢູ່ຂ້າງເທິງ, ຕຳແໜ່ງດັ່ງ
ກ່າວຈະມີຄົນອື່ນມາຮັບແທນຈາກການສະ
ເໜີຊື່ໂດຍປະທານຄົນໜຶ່ງ ຫລື ໂດຍກຸ່ມ
ປະທານ, ແລະ ໄດ້ຮັບການເຫັນພ້ອມໂດຍ
ສຽງຂອງສະພາມະຫາປະໂລຫິດ, ທີ່ມາຊຸມ
ນຸມກັນໃນຈຸດປະສົງນັ້ນ, ເພື່ອກະທຳໃນ
ນາມຂອງສາດສະໜາຈັກ.
9 ປະທານ ຂອງສາດສະໜາຈັກ, ຜູ້ຊຶ່ງ
ເປັນປະທານສະພານຳອີກ, ແມ່ນໄດ້ຖືກ
ແຕ່ງຕັ້ງໂດຍ [ກ]ການເປີດເຜີຍ, ແລະ [ຂ]ຖືກ
ຮັບຮູ້ໃນການບໍລິຫານງານຂອງເພິ່ນໂດຍ
ສຽງຂອງສາດສະໜາຈັກ.
10 ແລະ ມັນເປັນໄປຕາມກຽດສັກສີຂອງ
ໜ້າທີ່ຂອງເພິ່ນ ວ່າເພິ່ນຈະຄວບຄຸມສະພາ
ຂອງສາດສະໜາຈັກ; ແລະ ມັນເປັນສິດທິ
ພິເສດຂອງເພິ່ນທີ່ຈະມີປະທານຄົນອື່ນອີກ
ສອງຄົນມາຊ່ວຍເຫລືອ, ທີ່ຖືກແຕ່ງຕັ້ງໃນ
ແບບດຽວກັນກັບທີ່ເພິ່ນໄດ້ຖືກແຕ່ງຕັ້ງ.

2 *ກ* ຄພ 107:72–74.
9 *ກ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ຄມພ ການສະໜັບສະໜູນ ຜູ້ນຳຂອງສາດສະໜາຈັກ.

11 ແລະ ໃນກໍລະນີທີ່ຄົນໜຶ່ງໃນຈຳນວນສອງຄົນນັ້ນ ຫລື ທັງສອງ ທີ່ຖືກແຕ່ງຕັ້ງໃຫ້ຊ່ວຍເຫລືອເພິ່ນບໍ່ຢູ່, ເພິ່ນມີອຳນາດທີ່ຈະຄວບຄຸມສະພາ ໂດຍປາດສະຈາກຜູ້ຊ່ວຍ; ແລະ ໃນກໍລະນີທີ່ຕົວເພິ່ນເອງບໍ່ຢູ່, ປະທານຄົນອື່ນມີອຳນາດເປັນປະທານແທນເພິ່ນ, ທັງສອງຄົນ ຫລື ຄົນໃດຄົນໜຶ່ງໃນສອງຄົນນັ້ນ.

12 ເມື່ອໃດກໍຕາມທີ່ສະພາສູງຂອງສາດສະໜາຈັກຂອງພຣະຄຣິດຖືກຈັດຕັ້ງຂຶ້ນຢ່າງຖືກຕ້ອງ, ຕາມແບບແຜນທີ່ກ່າວມານັ້ນ, ມັນຈະເປັນໜ້າທີ່ຂອງສະມາຊິກສະພາສິບສອງທີ່ຈະຈົກສະຫລາກໝາຍເລກ, ແລະ ໂດຍການນີ້ຈະຮູ້ແນ່ວ່າຄົນໃດໃນສິບສອງຄົນຈະໄດ້ກ່າວເປັນຄົນທຳອິດ, ໂດຍການເລີ່ມຕົ້ນຈາກຜູ້ໝາຍເລກໜຶ່ງ ແລະ ຕໍ່ໆໄປຕາມລຳດັບຈົນເຖິງຜູ້ໝາຍເລກສິບສອງ.

13 ເມື່ອໃດກໍຕາມທີ່ສະພານີ້ມາຊຸມນຸມກັນເພື່ອດຳເນີນຄະດີໃດຄະດີໜຶ່ງ, ສະມາຊິກສະພາສິບສອງຈະພິຈາລະນາວ່າມັນຫຍຸ້ງຍາກຫລືບໍ່; ຖ້າມັນບໍ່ຫຍຸ້ງຍາກ, ແລ້ວສະມາຊິກສະພາສອງຄົນເທົ່ານັ້ນຈະກ່າວກ່ຽວກັບຄະດີນັ້ນ, ຕາມແບບແຜນທີ່ຂຽນໄວ້ຢູ່ຂ້າງເທິງ.

14 ແຕ່ຖ້າຫາກຄິດວ່າມັນຫຍຸ້ງຍາກ, ແລ້ວສີ່ຄົນຈະຖືກກຳນົດ; ແລະ ຖ້າຫາກຫຍຸ້ງຍາກວ່ານັ້ນ, ແລ້ວຫົກຄົນ; ແຕ່ບໍ່ມີຄະດີເລື່ອງໃດທີ່ຈະກຳນົດໃຫ້ກ່າວເກີນຫົກຄົນ.

15 ຈຳເລີຍ, ໃນທຸກຄະດີ, ມີສິດໃນເຄິ່ງໜຶ່ງຂອງສະພາ, ເພື່ອປ້ອງກັນການໝິ່ນປະໝາດ ຫລື ຄວາມບໍ່ຍຸດຕິທຳ.

16 ແລະ ສະມາຊິກສະພາທີ່ຖືກກຳນົດໃຫ້ກ່າວຢູ່ຕໍ່ໜ້າສະພາຈະສະເໜີຄະດີ, ຫລັງຈາກໄດ້ກວດກາເບິ່ງຫລັກຖານ, ຕາມຄວາມຈິງຢູ່ຕໍ່ໜ້າສະພາ; ແລະ ທຸກຄົນຈະກ່າວຕາມຄວາມສະເໝີພາບ ແລະ [ກ]ຄວາມຍຸດຕິທຳ.

17 ສະມາຊິກສະພາທີ່ຈົກສະຫລາກໄດ້ເລກທີ 2, 4, 6, 8, 10, ແລະ 12, ເປັນບຸກຄົນທີ່ຢືນຢູ່ເພື່ອຈຳເລີຍ, ແລະ ປ້ອງກັນການປະໝິ່ນປະໝາດ ແລະ ຄວາມບໍ່ຍຸດຕິທຳ.

18 ໃນທຸກຄະດີ ໂຈດ ແລະ ຈຳເລີຍມີສິດທີ່ຈະກ່າວເພື່ອຕົນເອງຢູ່ຕໍ່ໜ້າສະພາ, ຫລັງຈາກໄດ້ຍິນຫລັກຖານ ແລະ ສະມາຊິກສະພາຜູ້ທີ່ໄດ້ຖືກກຳນົດໃຫ້ກ່າວກ່ຽວກັບຄະດີໄດ້ໃຫ້ຄວາມຄິດຄວາມເຫັນຂອງເຂົາເຈົ້າແລ້ວ.

19 ຫລັງຈາກໄດ້ຍິນຫລັກຖານ, ສະມາຊິກສະພາ, ໂຈດ ແລະ ຈຳເລີຍໄດ້ກ່າວແລ້ວ, ປະທານຈະຕັດສິນຕາມຄວາມເຂົ້າໃຈຂອງເພິ່ນກ່ຽວກັບຄະດີນັ້ນ, ແລະ ຂໍໃຫ້ສະມາຊິກສະພາສິບສອງເຫັນພ້ອມໂດຍການອອກສຽງຂອງເຂົາເຈົ້າ.

20 ແຕ່ ຖ້າ ຫາກ ສະມາຊິກ ສະພາ ທີ່ເຫລືອຢູ່, ຜູ້ບໍ່ໄດ້ກ່າວ, ຫລື ຄົນໃດໃນເຂົາເຈົ້າ, ຫລັງຈາກໄດ້ຍິນຫລັກຖານ ແລະ ຄຳວິງວອນແບບບໍ່ຍຸດຕິທຳ, ພົບເຫັນຄວາມຜິດພາດໃນການຕັດສິນຂອງປະທານ, ແລ້ວເຂົາເຈົ້າຈະສະແດງມັນໃຫ້ປະຈັກ, ແລະ ຄະດີນັ້ນຈະມີການພິຈາລະນາໃໝ່.

21 ແລະ ຫລັງຈາກການພິຈາລະນາໃໝ່ຢ່າງລະມັດລະວັງ, ຖ້າຫາກມີຄວາມແຈ່ມແຈ້ງໃດໆມາຕື່ມໃສ່ຄະດີ, ແລ້ວກໍຈະຖືກປ່ຽນແປງຕາມນັ້ນ.

22 ແຕ່ໃນກໍລະນີທີ່ບໍ່ມີຄວາມແຈ່ມແຈ້ງ

16 *ກ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.

ໃດໆ ມາ ຕື່ມ ໃສ່, ແລ້ວ ການ ຕັດ ສິນ ເທື່ອ ທຳອິດຍັງມີສິດຢູ່, ແລະ ສະມາຊິກສະພາ ສ່ວນ ໃຫຍ່ກໍມີອຳນາດ ຕັດ ສິນ ຢ່າງດຽວ ກັນນັ້ນ.

23 ໃນກໍລະນີອັນຫຍຸ້ງຍາກທີ່ກ່ຽວກັບ [ກ]ຄຳສອນ ຫລື ຫລັກທຳ, ຖ້າຫາກບໍ່ມີຂຽນ ໄວ້ພໍທີ່ຈະເຮັດໃຫ້ຄະດີນັ້ນ ແຈ່ມແຈ້ງຕໍ່ ຄວາມຄິດຂອງສະພາ, ແລ້ວປະທານຈະ ທູນຖາມ ແລະ ຮັບພຣະປະສົງຂອງພຣະຜູ້ ເປັນເຈົ້າໂດຍ [ຂ]ການເປີດເຜີຍ.

24 ມະຫາປະໂລຫິດ, ເມື່ອຢູ່ບ່ອນອື່ນ, ມີ ອຳນາດທີ່ຈະເອີ້ນ ແລະ ຈັດຕັ້ງສະພາຕາມ ວິທີທີ່ກ່າວມາກ່ອນນັ້ນ, ເພື່ອແກ້ໄຂບັນຫາ ຫຍຸ້ງຍາກ, ເມື່ອທັງສອງຝ່າຍ ຫລື ຝ່າຍໃດ ຝ່າຍໜຶ່ງຮຽກຮ້ອງ.

25 ແລະ ສະພາ ມະຫາ ປະ ໂລ ຫິດ ດັ່ງ ກ່າວ ຈະມີອຳນາດທີ່ຈະກຳນົດຄົນໜຶ່ງ ໃນ ຈຳນວນພວກເຂົາເຈົ້າເອງໃຫ້ຄວບຄຸມ ສະພາດັ່ງກ່າວສຳລັບເວລານັ້ນ.

26 ມັນຈະເປັນໜ້າທີ່ຂອງສະພາດັ່ງກ່າວ ທີ່ຈະສົ່ງໃບສຳເນົາຂອງການດຳເນີນການ ຂອງເຂົາເຈົ້າສະບັບໜຶ່ງ, ໂດຍທັນທີ, ພ້ອມ ດ້ວຍປະຈັກພະຍານອັນຄົບຖ້ວນຂອງ ການຕັດສິນຂອງເຂົາເຈົ້າ, ໄປໃຫ້ສະພາ ສູງທີ່ຢູ່ກັບຝ່າຍປະທານສູງສຸດຂອງສາດ ສະໜາຈັກ.

27 ຖ້າ ຫາກ ທັງ ສອງ ຝ່າຍ ຫລື ຝ່າຍ ໃດຝ່າຍໜຶ່ງບໍ່ພໍໃຈກັບການຕັດສິນຂອງ ສະພາດັ່ງກ່າວ, ເຂົາເຈົ້າສາມາດອຸທອນ ຂຶ້ນໄປຫາສະພາສູງ ທີ່ຢູ່ກັບຝ່າຍປະທານ ສູງສຸດຂອງສາດສະໜາຈັກ, ແລະ ຂໍໃຫ້ມີ ການພິຈາລະນາໃໝ່, ຊຶ່ງຄະດີນັ້ນຈະຖືກ ຮັບຟັງ, ຕາມແບບແຜນທີ່ຂຽນໄວ້, ຄືກັບ ວ່າບໍ່ມີການຕັດສິນເຊັ່ນນັ້ນມາກ່ອນ.

28 ສະພານີ້ຂອງມະຫາປະໂລຫິດ ທີ່ ເດີນທາງໄປບ່ອນອື່ນ ຈະຖືກເອີ້ນພຽງ ແຕ່ໃນກໍລະນີທີ່ເປັນຄະດີ ທີ່ [ກ]ຫຍຸ້ງຍາກ ທີ່ສຸດຂອງສາດສະໜາຈັກເທົ່ານັ້ນ; ແລະ ບໍ່ມີຄະດີທີ່ທຳມະດາ ຫລື ຄະດີທີ່ປົກກະ ຕິໃດທີ່ມີເຫດຜົນພຽງພໍທີ່ຈະເອີ້ນສະພາ ເຊັ່ນນັ້ນ.

29 ມະຫາປະໂລຫິດທີ່ເຄື່ອນທີ່ ຫລື ປະ ຈຳການ ຢູ່ບ່ອນອື່ນ ມີອຳນາດທີ່ຈະກ່າວ ວ່າຈຳເປັນ ຫລື ບໍ່ຈຳເປັນທີ່ຈະເອີ້ນສະພາ ເຊັ່ນນັ້ນ.

30 ມີ ຄວາມ ແຕກ ຕ່າງ ລະຫວ່າງ ສະພາ ສູງ ຫລື ມະຫາປະໂລຫິດເຄື່ອນທີ່, ແລະ [ກ]ສະພາ ສູງ ເຄື່ອນ ທີ່ ຊຶ່ງປະກອບດ້ວຍ [ຂ]ອັກຄະສາວົກສິບສອງ, ໃນການຕັດສິນ ຂອງເຂົາເຈົ້າ.

31 ຈາກການ ຕັດ ສິນ ຂອງ ສະພາ ກ່ອນ ຈະມີການອຸທອນໄດ້; ແຕ່ຈາກການຕັດສິນ ຂອງສະພາທີຫລັງ ຈະອຸທອນບໍ່ໄດ້.

32 ການຕັດສິນທີຫລັງຈະຖືກເອີ້ນ ພຽງ ແຕ່ເພື່ອສອບຖາມ ໂດຍເຈົ້າໜ້າທີ່ຊັ້ນຜູ້ ໃຫຍ່ ຂອງສາດສະໜາຈັກເທົ່ານັ້ນ ໃນກໍ ລະນີທີ່ມີການລ່ວງລະເມີດ.

33 ການ ຕົກ ລົງ: ວ່າປະທານ ຫລື ກຸ່ມ ປະທານທີ່ຢູ່ກັບຝ່າຍປະທານສູງສຸດຂອງ ສາດສະໜາຈັກ ຈະມີອຳນາດທີ່ຈະຕັດສິນ ຄະດີໃດໆເຊັ່ນນັ້ນ, ດັ່ງທີ່ໄດ້ອຸທອນ, ວ່າມີ ສິດທີ່ຈະພິຈາລະນາໃໝ່ຫລືບໍ່, ຫລັງຈາກ ໄດ້ກວດກາເບິ່ງການອຸທອນ ແລະ ຫລັກ ຖານ ແລະ ຄຳຢືນຢັນທີ່ຕິດມານຳ.

34 ຈາກນັ້ນ ສະມາຊິກສະພາສິບສອງ ຄົນ ໄດ້ເລີ່ມຕົ້ນການ ຈົກສະຫລາກ ຫລື ປ່ອນບັດ, ເພື່ອໃຫ້ຮູ້ແນ່ວ່າຜູ້ໃດຄວນກ່າວ ກ່ອນ, ແລະ ຕໍ່ໄປນີ້ແມ່ນຜົນທີ່ໄດ້ຮັບ, ນັ້ນ

23 *ກ* ຈບຊ 9:8.
*ຂ* ຄນພ ເປີດເຜີຍ, ການເປີດເຜີຍ.
28 *ກ* ຄພ 107:78.
30 *ກ* ຄພ 107:23–24, 35–38.
*ຂ* ຄນພ ອັກຄະສາວົກ.

ຄື: 1, ອໍລີເວີ ຄາວເດີຣີ; 2, ໂຈເຊັບ ໂຄ; 3, ແຊມໂຍ ເອັຈ ສະມິດ; 4, ລຸກ ຈອນສັນ; 5, ຈອນ ແອັສ ຄາດເທີ; 6, ຊຽວເວສ໌ເຕີ ສະມິດ; 7, ຈອນ ຈອນ ສັນ; 8, ອໍສັນ ຮາຍດ໌; 9, ແຈເຣັດ ຄາດເທີ; 10, ໂຈເຊັບ ສະມິດ, ຜູ້ພໍ່; 11, ຈອນ ສະມິດ; 12, ມາຕິນ ແຮຣິສ.ຫລັງຈາກການອະທິຖານ ແລ້ວກໍໄດ້ປິດການປະຊຸມ.

ອໍລີເວີ ຄາວເດີຣີ,
ອໍສັນ ຮາຍດ໌,
ສະໝຽນ

## ພາກທີ 103

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 24 ເດືອນກຸມພາ, 1834. ການເປີດເຜີຍນີ້ໄດ້ຮັບຫລັງຈາກພາລີ ພີ ພະແຣັດ ແລະ ໄລມັນ ໄວ້ ໄດ້ມາເຖິງເມືອງເຄີດແລນ, ລັດໂອໄຮໂອ, ຜູ້ທີ່ໄດ້ມາຈາກລັດມິເຊີຣີເພື່ອປຶກສາຫາລືກັບສາດສະດາກ່ຽວກັບການສົງເຄາະ ແລະ ການສົ່ງໄພ່ພົນຂອງພຣະເຈົ້າກັບຄືນສູ່ແຜ່ນດິນຂອງເຂົາເຈົ້າໃນເຂດແຈັກສັນ.*

*1–4, ດ້ວຍເຫດໃດພຣະຜູ້ເປັນເຈົ້າຈຶ່ງອະນຸຍາດໃຫ້ໄພ່ພົນຂອງພຣະເຈົ້າໃນເຂດແຈັກສັນຖືກຂົ່ມເຫັງ; 5–10, ໄພ່ພົນຂອງພຣະເຈົ້າຈະຊະນະຖ້າຫາກພວກເຂົາຮັກສາພຣະບັນຍັດ; 11–20, ການໄຖ່ຊີໂອນຈະມາເຖິງໂດຍອຳນາດ, ແລະ ພຣະຜູ້ເປັນເຈົ້າຈະເດີນອອກໜ້າຜູ້ຄົນຂອງພຣະອົງ; 21–28, ໄພ່ພົນຂອງພຣະເຈົ້າຕ້ອງໄປເຕົ້າໂຮມກັນໃນຊີໂອນ, ແລະ ຄົນທີ່ມອບຊີວິດຂອງຕົນ ຈະພົບມັນອີກ; 29–40, ອ້າຍນ້ອງຫລາຍຄົນໄດ້ຖືກເອີ້ນໃຫ້ຈັດຕັ້ງຄ້າຍຊີໂອນຂຶ້ນ ແລະ ໃຫ້ໄປຫາຊີໂອນ; ພວກເຂົາຖືກສັນຍາວ່າ ພວກເຂົາຈະໄດ້ຮັບໄຊຊະນະຖ້າຫາກພວກເຂົາຊື່ສັດ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າ, ເພື່ອນຂອງເຮົາ, ຈົ່ງເບິ່ງ, ເຮົາຈະມອບການເປີດເຜີຍ ແລະ ບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າ, ເພື່ອວ່າພວກເຈົ້າຈະຮູ້ວິທີທີ່ຈະ [ກ]ປະຕິບັດຕົນໃນການເຮັດໜ້າທີ່ຂອງພວກເຈົ້າກ່ຽວກັບຄວາມລອດ ແລະ [ຂ]ການໄຖ່ອ້າຍເອື້ອຍນ້ອງຂອງພວກເຈົ້າ, ຜູ້ທີ່ຖືກເຮັດໃຫ້ກະຈັດກະຈາຍໄປໃນແຜ່ນດິນຊີໂອນ;

2 ໂດຍຖືກ [ກ]ຂັບໄລ່ ແລະ ຖືກຕີໂດຍມືຂອງສັດຕູຂອງເຮົາ, ຜູ້ຊຶ່ງເຮົາຈະຖອກເທພຣະພິໂລດຂອງເຮົາລົງມາເທິງພວກເຂົາຢ່າງປະເມີນບໍ່ໄດ້ໃນເວລາຂອງເຮົາເອງ.

3 ເພາະ ເຮົາໄດ້ຍອມໃຫ້ພວກເຂົາໄດ້ຮັບທຸກທໍລະມານຈົນເຖິງເວລານີ້, ເພື່ອວ່າພວກເຂົາຈະໄດ້ [ກ]ເຕີມຄວາມຊົ່ວຮ້າຍຂອງພວກເຂົາໃຫ້ເຕັມ, ຈົນວ່າຈອກຂອງພວກເຂົາເຕັມປ່ຽມ;

4 ແລະ ວ່າຄົນທີ່ເອີ້ນຕົນເອງຕາມນາມຂອງເຮົາຈະຖືກຕີສອນຊົ່ວໄລຍະໜຶ່ງດ້ວຍ [ກ]ການຕີສອນທີ່ສາຫັດ ແລະ ຮ້າຍ

**103** 1 *ກ* ຄພ 43:8.
*ຂ* ຄພ 101:43–62.
2 *ກ* ຄພ 101:1; 109:47.
3 *ກ* ແອວ 14:10–11; 60:13.
4 *ກ* ຄພ 95:1.
ຄມພ ຕີສອນ, ການຕີສອນ.

ແຮງ, ເພາະພວກເຂົາບໍ່ໄດ້ [ຂ]ເຊື່ອຟັງກົດ ແລະ ບັນຍັດທັງໝົດ ຊຶ່ງເຮົາໄດ້ມອບໃຫ້ແກ່ພວກເຂົາ.

5 ແຕ່ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາໄດ້ອອກຄຳສັ່ງ ຊຶ່ງຜູ້ຄົນຂອງເຮົາຈະຕ້ອງຮູ້, ຕາບໃດທີ່ພວກເຂົາຈະເຊື່ອຟັງນັບແຕ່ຊົ່ວໂມງນີ້ໄປຕໍ່ [ກ]ຄຳແນະນຳຊຶ່ງເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ຈະມອບໃຫ້ແກ່ພວກເຂົາ.

6 ຈົ່ງ ເບິ່ງ ເພາະ ເຮົາ ໄດ້ ອອກ ຄຳ ສັ່ງ, ພວກເຂົາຈະເລີ່ມຕົ້ນເອົາຊະນະສັດຕູຂອງພວກເຂົານັບແຕ່ຊົ່ວໂມງນີ້ແລ້ວ.

7 ແລະ ໂດຍ [ກ]ການເຊື່ອຟັງທີ່ຈະຍຶດຖືຖ້ອຍຄຳທັງປວງຊຶ່ງເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ຈະກ່າວກັບພວກເຂົາ, ພວກເຂົາຈະບໍ່ມີວັນຢຸດຊະນະ ຈົນກວ່າ [ຂ]ອານາຈັກທັງຫລາຍຂອງໂລກຈະຖືກປາບຢູ່ໃຕ້ຕີນຂອງເຮົາ, ແລະ ແຜ່ນດິນໂລກຖືກ [ຄ]ມອບໃຫ້ແກ່ [ງ]ໄພ່ພົນຂອງພຣະເຈົ້າ, ເພື່ອ [ຈ]ປົກຄອງມັນຕະຫລອດການ ແລະ ຕະຫລອດໄປ.

8 ແຕ່ຕາບໃດທີ່ພວກເຂົາບໍ່ [ກ]ຮັກສາບັນຍັດຂອງເຮົາ, ແລະ ບໍ່ເຊື່ອຟັງທີ່ຈະຍຶດຖືຖ້ອຍຄຳຂອງເຮົາທັງໝົດ, ແລ້ວອານາຈັກທັງຫລາຍຂອງໂລກຈະເອົາຊະນະພວກເຂົາ.

9 ເພາະພວກເຂົາໄດ້ຖືກຕັ້ງໄວ້ເພື່ອເປັນ [ກ]ຄວາມສະຫວ່າງໃຫ້ແກ່ໂລກ, ແລະ ເພື່ອເປັນຜູ້ຊ່ວຍໃຫ້ລອດ ຂອງມະນຸດ;

10 ແລະ ຕາບໃດທີ່ພວກເຂົາບໍ່ໄດ້ເປັນຜູ້ຊ່ວຍໃຫ້ລອດຂອງມະນຸດ, ພວກເຂົາກໍຄືກັນກັບ [ກ]ເກືອທີ່ໝົດລົດເຄັມຂອງມັນ, ແລະ ຕໍ່ຈາກນັ້ນໄປມັນກໍຈະບໍ່ມີປະໂຫຍດອັນໃດເລີຍ ແຕ່ຈະຖືກໂຍນຖິ້ມໃຫ້ຄົນຢຽບຢ່ຳເທົ່ານັ້ນ.

11 ແຕ່ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາໄດ້ອອກຄຳສັ່ງວ່າ ອ້າຍເອື້ອຍນ້ອງຂອງພວກເຈົ້າຜູ້ໄດ້ຖືກເຮັດໃຫ້ກະຈັດກະຈາຍໄປ ຈະໄດ້ກັບຄືນສູ່ [ກ]ແຜ່ນດິນມູນມໍລະດົກຂອງພວກເຂົາ, ແລະ ຈະສ້າງແຜ່ນດິນທີ່ຮົກຮ້າງຂອງຊີໂອນຂຶ້ນໃໝ່.

12 ເພາະຫລັງຈາກ [ກ]ຄວາມທຸກຍາກລຳບາກຢ່າງຫລວງຫລາຍ, ດັ່ງທີ່ເຮົາໄດ້ກ່າວກັບພວກເຈົ້າໃນບັນຍັດຂໍ້ກ່ອນນັ້ນ, ພອນຈະມາເຖິງ.

13 ຈົ່ງເບິ່ງ, ນີ້ຄືພອນຊຶ່ງເຮົາໄດ້ສັນຍາຫລັງຈາກຄວາມທຸກຍາກລຳບາກຂອງພວກເຈົ້າ, ແລະ ຄວາມທຸກຍາກລຳບາກຂອງອ້າຍເອື້ອຍນ້ອງຂອງພວກເຈົ້າ—ການໄຖ່ຂອງພວກເຈົ້າ, ແລະ ການໄຖ່ຂອງອ້າຍເອື້ອຍນ້ອງຂອງພວກເຈົ້າ, ແມ່ນແຕ່ການກັບຄືນໄປສູ່ແຜ່ນດິນຊີໂອນຂອງພວກເຂົາ, ເພື່ອຖືກຈັດຕັ້ງຂຶ້ນ, ບໍ່ຖືກໂຄ່ນລົງອີກຕໍ່ໄປ.

14 ເຖິງຢ່າງໃດກໍຕາມ, ຖ້າຫາກພວກເຂົາເຮັດໃຫ້ມູນມໍລະດົກຂອງພວກເຂົາເປິເປື້ອນ ພວກເຂົາຈະຖືກໂຄ່ນລົງ; ເພາະເຮົາຈະບໍ່ໄວ້ຊີວິດພວກເຂົາ ຖ້າຫາກພວກເຂົາເຮັດໃຫ້ມູນມໍລະດົກຂອງພວກເຂົາເປິເປື້ອນ.

---

4 *ຂ* ຄພ 101:2; 105:2–6.
5 *ກ* ຄມພ ຄຳແນະນຳ.
7 *ກ* ຄພ 35:24.
ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
*ຂ* ດນອ 2:44.
*ຄ* ດນອ 7:27.
*ງ* ຄມພ ໄພ່ພົນຂອງພຣະເຈົ້າ.
*ຈ* ຄພ 38:20.
8 *ກ* ມຊຢ 1:13; ຄພ 82:10.
9 *ກ* 1 ນຟ 21:6.
10 *ກ* ມທ 5:13–16; ຄພ 101:39–40.
11 *ກ* ຄພ 101:18.
12 *ກ* ພນມ 7:13–14; ຄພ 58:4; 112:13.

15 ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ
ການໄຖ່ຊີໂອນຕ້ອງມາເຖິງໂດຍອຳນາດ;
16 ສະນັ້ນ, ເຮົາຈະ ຍົກຄົນໜຶ່ງຂຶ້ນໃຫ້
ແກ່ຜູ້ຄົນຂອງເຮົາ, ຜູ້ຈະນຳພາພວກເຂົາ
ເໝືອນ ດັ່ງ [ກ] ໂມເຊ ໄດ້ນຳພາ ລູກ ຫລານ
ຂອງອິດສະຣາເອນ.
17 ເພາະພວກເຈົ້າເປັນລູກຫລານຂອງ
ອິດສະຣາເອນ, ແລະ ເປັນ [ກ]ເຊື້ອສາຍຂອງ
ອັບຣາຮາມ, ແລະ ພວກເຈົ້າຈຳເປັນຕ້ອງ
ຖືກພາ ອອກ ຈາກຄວາມເປັນທາດ ໂດຍ
ອຳນາດ, ແລະ ດ້ວຍແຂນທີ່ເດ່ອອກມາ.
18 ແລະ ເໝືອນດັ່ງທີ່ບັນພະບຸລຸດຂອງ
ພວກເຈົ້າໄດ້ຖືກພາອອກມາໃນ ເທື່ອທຳ
ອິດນັ້ນ, ແມ່ນແຕ່ການ ໄຖ່ຊີໂອນຈະເປັນ
ເຊັ່ນນັ້ນເໝືອນກັນ.
19 ສະນັ້ນ, ຢ່າທໍ້ຖອຍ ໃຈ ເລີຍ, ເພາະ
ເຮົາບໍ່ ໄດ້ກ່າວກັບພວກເຈົ້າດັ່ງທີ່ເຮົາໄດ້
ກ່າວກັບບັນພະບຸລຸດຂອງພວກເຈົ້າວ່າ:
[ກ]ທູດຂອງເຮົາຈະອອກໜ້າພວກເຈົ້າ, ແຕ່
ບໍ່ແມ່ນ [ຂ]ການປະທັບຢູ່ຂອງເຮົາ.
20 ແຕ່ ເຮົາກ່າວກັບພວກເຈົ້າວ່າ: [ກ]ທູດ
ຂອງ ເຮົາ ຈະ ອອກ ໜ້າພວກເຈົ້າ, ແລະ
ການປະທັບຢູ່ຂອງເຮົາຄືກັນ, ແລະ ໃນທີ່
ສຸດພວກເຈົ້າຈະໄດ້ [ຂ]ຄອບຄອງແຜ່ນດິນທີ່
ດີ.
21 ຕາມຄວາມຈິງ, ຕາມຄວາມຈິງແລ້ວ
ເຮົາກ່າວກັບພວກເຈົ້າວ່າ ຜູ້ຮັບ ໃຊ້ຂອງ
ເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຄື [ກ]ຄົນທີ່ເຮົາ
ປຽບ ໃສ່ກັບຄົນໃຊ້ຜູ້ທີ່ເຈົ້າຂອງ [ຂ]ສວນ
ອະງຸ່ນໄດ້ກ່າວເຖິງໃນຄຳອຸປະມາທີ່ເຮົາໄດ້
ມອບໃຫ້ພວກເຈົ້າ.
22 ສະນັ້ນ ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ສະມິດ, ຜູ້ລູກ, ກ່າວກັບ [ກ]ກຳລັງຂອງຄົວ
ເຮືອນຂອງເຮົາ, ຊາຍໜຸ່ມ ແລະ ຄົນໃນ
ໄວກາງອາຍຸຂອງເຮົາ—ໃຫ້ເຕົ້າໂຮມຕົນ
ເອງເພື່ອຂຶ້ນໄປຍັງແຜ່ນດິນຊີໂອນ, ໄປ
ຫາແຜ່ນດິນຊຶ່ງເຮົາໄດ້ຊື້ດ້ວຍເງິນທີ່ອຸທິດ
ຖວາຍແກ່ເຮົາ.
23 ແລະ ໃຫ້ໜ່ວຍຂອງສາດສະໜາຈັກ
ທັງໝົດ ສົ່ງຊາຍທີ່ສະຫລາດ ພ້ອມດ້ວຍ
ເງິນຂອງພວກເຂົາ, ແລະ [ກ]ຊື້ທີ່ດິນ ແມ່ນ
ແຕ່ດັ່ງທີ່ເຮົາໄດ້ບັນຊາພວກເຂົາ.
24 ແລະ ຕາບໃດທີ່ສັດຕູຂອງເຮົາມາຮຸກ
ຮານພວກເຈົ້າ ເພື່ອຂັບໄລ່ພວກເຈົ້າອອກ
ໄປຈາກ [ກ]ທີ່ດິນທີ່ດີຂອງເຮົາ, ຊຶ່ງເຮົາໄດ້ອຸ
ທິດໃຫ້ເປັນແຜ່ນດິນຊີໂອນ, ແມ່ນແຕ່ອອກ
ຈາກທີ່ດິນຂອງພວກເຈົ້າ ຫລັງຈາກປະຈັກ
ພະຍານເຫລົ່ານີ້, ຊຶ່ງພວກເຈົ້າໄດ້ມາຟ້ອງ
ພວກເຂົາຢູ່ຕໍ່ໜ້າເຮົາ, ພວກເຈົ້າຈະສາບ
ແຊ່ງພວກເຂົາ;
25 ແລະ ຜູ້ໃດກໍຕາມທີ່ພວກເຈົ້າສາບ
ແຊ່ງ, ເຮົາຈະສາບແຊ່ງ, ແລະ ພວກເຈົ້າ
ຈະແກ້ແຄ້ນສັດຕູຂອງເຮົາໃຫ້ເຮົາ.
26 ແລະ ການປະທັບຢູ່ຂອງເຮົາຈະຢູ່
ກັບພວກເຈົ້າ ແມ່ນແຕ່ໃນ [ກ]ການແກ້ແຄ້ນ
ສັດຕູຂອງເຮົາໃຫ້ເຮົາ, ຈົນເຖິງຄົນລຸ້ນທີ
ສາມ ແລະ ທີສີ່ຂອງພວກເຂົາທີ່ກຽດຊັງ
ເຮົາ.
27 ຢ່າໃຫ້ຄົນໃດຢ້ານກົວທີ່ຈະມອບຊີ
ວິດຂອງຕົນເພື່ອເຫັນແກ່ເຮົາ; ເພາະຄົນ

16 *ກ* ອພຍ 3:2–10;
ຄພ 107:91–92.
ຄມພ ໂມເຊ.
17 *ກ* ຄມພ ພັນທະສັນຍາຂອງ
ອັບຣາຮາມ;
ອັບຣາຮາມ—ເຊື້ອສາຍ
ຂອງອັບຣາຮາມ.
19 *ກ* ຄມພ ທູດ, ເທວະດາ.
*ຂ* ຄພ 84:18–24.
20 *ກ* ອພຍ 14:19–20.
*ຂ* ຄພ 100:13.
21 *ກ* ຄພ 101:55–58.
*ຂ* ຄມພ ສວນອະງຸ່ນຂອງ
ພຣະຜູ້ເປັນເຈົ້າ.
22 *ກ* ຄພ 35:13–14;
105:16, 29–30.
23 *ກ* ຄພ 42:35–36; 57:5–7;
58:49–51; 101:68–74.
24 *ກ* ຄພ 29:7–8;
45:64–66; 57:1–2.
26 *ກ* ຄພ 97:22.

ໃດກໍຕາມທີ່ *ກ*ມອບຊີວິດຂອງຕົນເພື່ອເຫັນ
ແກ່ເຮົາ ຈະພົບມັນອີກ.
28 ແລະ ຄົນໃດກໍຕາມທີ່ບໍ່ເຕັມໃຈທີ່ຈະ
ມອບຊີວິດຂອງຕົນເພື່ອເຫັນແກ່ເຮົາ ບໍ່ໄດ້
ເປັນສານຸສິດຂອງເຮົາ.
29 ມັນ ເປັນຄວາມປະສົງຂອງເຮົາທີ່ຜູ້
ຮັບໃຊ້ຂອງເຮົາ *ກ*ຊິດນີ ຣິກດອນ ຈະເປັ່ງ
ສຽງຂອງລາວຢູ່ໃນບ່ອນຊຸມນຸມໃນດິນ
ແດນ ພາກ ຕາ ເວັນ ອອກ, ໃນການຕຽມ
ໜ່ວຍຕ່າງໆຂອງສາດສະໜາຈັກ ໃຫ້ຮັກ
ສາບັນຍັດ ຊຶ່ງເຮົາໄດ້ມອບໃຫ້ແກ່ພວກ
ເຂົາກ່ຽວກັບການຟື້ນຟູ ແລະ ການໄຖ່
ຊີໂອນ.
30 ມັນ ເປັນ ຄວາມ ປະສົງ ຂອງ ເຮົາ ທີ່ ຜູ້
ຮັບໃຊ້ຂອງເຮົາ *ກ*ພາລີ ພີ ພະແຣັດ ແລະ
ຜູ້ຮັບໃຊ້ຂອງເຮົາ ໄລມັນ ໄວ້ ທີ່ຈະບໍ່ກັບ
ໄປ ຫາ ແຜ່ນ ດິນ ຂອງ ອ້າຍ ເອື້ອຍ ນ້ອງ
ຂອງພວກເຂົາ, ຈົນກວ່າພວກເຂົາໄດ້ເຕົ້າ
ໂຮມຜູ້ຄົນເພື່ອຂຶ້ນໄປຍັງແຜ່ນດິນຊີໂອນ
ເສຍກ່ອນ, ເປັນສິບໆ, ຫລື ຊາວ, ຫລື ຫ້າ
ສິບ, ຫລື ເປັນຮ້ອຍ, ຈົນກວ່າພວກເຂົາມີ
ຈຳນວນພົນເຖິງຫ້າຮ້ອຍຄົນ ຈາກ *ຂ*ກຳລັງ
ຂອງຄົວເຮືອນຂອງເຮົາ.
31 ຈົ່ງເບິ່ງ ນີ້ຄືຄວາມປະສົງຂອງເຮົາ; ຂໍ
ແລະ ພວກເຈົ້າຈະໄດ້ຮັບ; ແຕ່ມະນຸດ *ກ*ບໍ່
ເຮັດຕາມຄວາມປະສົງຂອງເຮົາສະເໝີໄປ.
32 ສະນັ້ນ, ຖ້າຫາກພວກເຈົ້າບໍ່ສາມາດ
ຫາຈຳນວນພົນໄດ້ເຖິງຫ້າຮ້ອຍຄົນ, ຈົ່ງພະ
ຍາຍາມຢ່າງພາກພຽນ ເພື່ອພວກເຈົ້າຈະ
ໄດ້ສາມຮ້ອຍຄົນ.
33 ແລະ ຖ້າຫາກພວກເຈົ້າບໍ່ສາມາດຫາ
ຈຳນວນພົນໄດ້ເຖິງສາມຮ້ອຍຄົນ, ຈົ່ງພະ
ຍາຍາມຢ່າງພາກພຽນ ເພື່ອພວກເຈົ້າຈະ
ໄດ້ໜຶ່ງຮ້ອຍຄົນ.
34 ແຕ່ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້
ແກ່ພວກເຈົ້າ, ວ່າພວກເຈົ້າຈະບໍ່ຂຶ້ນໄປຍັງ
ແຜ່ນດິນຊີໂອນ ຈົນກວ່າພວກເຈົ້າມີພົນ
ໜຶ່ງຮ້ອຍຄົນ ຈາກກຳລັງຂອງຄົວເຮືອນ
ຂອງເຮົາ, ເພື່ອຂຶ້ນໄປຍັງແຜ່ນດິນຊີໂອນ
ກັບພວກເຈົ້າ.
35 ສະນັ້ນ, ດັ່ງທີ່ເຮົາໄດ້ກ່າວກັບພວກ
ເຈົ້າ, ຂໍ ແລະ ພວກເຈົ້າຈະໄດ້ຮັບ; ຈົ່ງອະທິ
ຖານຢ່າງຕັ້ງໃຈເພື່ອວ່າຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ ສະມິດ, ຜູ້ລູກ, ຈະໄດ້ໄປກັບພວກ
ເຈົ້າ, ແລະ ຄວບຄຸມດູແລໃນທ່າມກາງຜູ້
ຄົນຂອງເຮົາ, ແລະ ຈັດຕັ້ງອານາຈັກຂອງ
ເຮົາຂຶ້ນຢູ່ເທິງແຜ່ນດິນທີ່ *ກ*ອຸທິດໄວ້, ແລະ
ສະຖາປະນາລູກຫລານຂອງຊີໂອນໄວ້
ເທິງກົດ ແລະ ບັນຍັດ ຊຶ່ງໄດ້ມອບໃຫ້ແລ້ວ
ແລະ ຈະມອບໃຫ້ພວກເຈົ້າ.
36 ໄຊຊະນະ ແລະ ລັດສະໝີພາບທັງ
ໝົດທີ່ເກີດຂຶ້ນກັບພວກເຈົ້າ ແມ່ນຜ່ານ
*ກ*ຄວາມພາກພຽນ, ຄວາມຊື່ສັດ, ແລະ *ຂ*ຄຳ
ອະທິຖານດ້ວຍສັດທາຂອງພວກເຈົ້າ.
37 ໃຫ້ຜູ້ຮັບໃຊ້ຂອງເຮົາ ພາລີ ພີ ພະແຣັດ
ເດີນທາງໄປກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ສະມິດ, ຜູ້ລູກ
38 ໃຫ້ຜູ້ຮັບໃຊ້ຂອງເຮົາ ໄລມັນ ໄວ້ ເດີນ
ທາງ ໄປ ກັບ ຜູ້ຮັບ ໃຊ້ຂອງເຮົາ ຊິດນີ ຣິກ
ດອນ.
39 ໃຫ້ຜູ້ຮັບໃຊ້ຂອງເຮົາ ໄຮຣຳ ສະມິດ
ເດີນ ທາງໄປກັບຜູ້ຮັບໃຊ້ຂອງເຮົາ ເຟຣ໌
ເດຣິກ ຈີ ວິວລຽມສ໌.

27 *ກ* ມທ 10:39;
ລກ 9:24;
ຄພ 98:13–15; 124:54.
29 *ກ* ຄມພ ຣິກດອນ, ຊິດນີ.
30 *ກ* ຄມພ ພະແຣັດ,
ພາລີ ພາກເກີ.
*ຂ* ຄພ 101:55.
31 *ກ* ຄພ 82:10.
35 *ກ* ຄພ 84:31.
36 *ກ* ຄມພ ພາກພຽນ,
ຄວາມພາກພຽນ.
*ຂ* ຄພ 104:79–82.

40 ໃຫ້ຜູ້ຮັບໃຊ້ຂອງເຮົາ ອໍສັນ ຮາຍດ໌ ເດີນທາງໄປກັບຜູ້ຮັບໃຊ້ຂອງເຮົາ ອໍສັນ ພະແຣັດ, ໄປຫາບ່ອນໃດກໍຕາມທີ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຈະແນະນຳພວກເຂົາ, ໃນການບັນລຸບັນຍັດເຫລົ່ານີ້ ຊຶ່ງເຮົາໄດ້ມອບໃຫ້ແກ່ພວກເຈົ້າ, ແລະ ປະສ່ວນທີ່ເຫລືອຢູ່ໄວ້ໃນມືຂອງເຮົາ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 104

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ທີ່ ຫລື ໃກ້ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 23 ເດືອນເມສາ, 1834, ກ່ຽວກັບກຸ່ມທຸລະກິດເອກະພາບ (ເບິ່ງ ຫົວຂໍ້ຂອງ ພາກທີ 78 ແລະ 82). ເຫດການນັ້ນ ເປັນການປະຊຸມສະພາສະມາຊິກຂອງກຸ່ມທຸລະກິດເອກະພາບ ໄດ້ມີການສົນທະນາເນັ້ນເລື່ອງຄວາມຕ້ອງການທາງໂລກຂອງສາດສະໜາຈັກ. ການປະຊຸມທີ່ຜ່ານມາຂອງກຸ່ມທຸລະກິດ ທີ່ຖືກຈັດຂຶ້ນເມື່ອວັນທີ 10 ເດືອນເມສາ ໄດ້ລົງຄວາມເຫັນວ່າ ຕ້ອງໄດ້ຍົກເລີກກຸ່ມທຸລະກິດ. ການເປີດເຜີຍນີ້ແນະນຳຢ່າງນັ້ນ ແທນທີ່ຈະຈັດຕັ້ງທຸລະກິດຄືນໃໝ່; ໃຫ້ແບ່ງປັນຊັບສິນໃນບັນດາສະມາຊິກຂອງກຸ່ມທຸລະກິດ ຕາມຕຳແໜ່ງພິທັກຮັກສາຂອງເຂົາເຈົ້າ. ພາຍໃຕ້ການຊີ້ນຳຂອງໂຈເຊັບ ສະມິດ, ສຳນວນທີ່ວ່າ "ກຸ່ມທຸລະກິດເອກະພາບ" ຕໍ່ມາໄດ້ຖືກປ່ຽນເປັນ "ລະບົບເອກະພາບ" ໃນການເປີດເຜີຍ.*

*1–10, ໄພ່ພົນຂອງພຣະເຈົ້າຜູ້ລ່ວງລະເມີດລະບົບເອກະພາບຈະຖືກສາບແຊ່ງ; 11–16, ພຣະຜູ້ເປັນເຈົ້າຈັດຫາໃຫ້ໄພ່ພົນຂອງພຣະເຈົ້າ ໃນວິທີທາງຂອງພຣະອົງເອງ; 17–18, ກົດຂອງພຣະກິດຕິຄຸນຊີ້ນຳເລື່ອງການດູແລຄົນຍາກຈົນ; 19–46, ສິ່ງທີ່ຕ້ອງພິທັກຮັກສາ ແລະ ພອນ ໄດ້ຖືກມອບໝາຍໃຫ້ອ້າຍນ້ອງຫລາຍຄົນ; 47–53, ຕ້ອງບໍລິຫານລະບົບເອກະພາບໃນເມືອງເຄີດແລນ ແລະ ລະບົບເອກະພາບໃນຊີໂອນ ແບບບໍ່ຄືກັນ; 54–66, ຄັງທີ່ສັກສິດຂອງພຣະຜູ້ເປັນເຈົ້າໄດ້ຖືກຈັດຕັ້ງຂຶ້ນສຳລັບການພິມພຣະຄຳພີ; 67–77, ຕ້ອງບໍລິຫານຄັງທົ່ວໄປຂອງລະບົບເອກະພາບໃນພື້ນຖານຂອງການເຫັນພ້ອມກັນ; 78–86, ຄົນທີ່ຢູ່ໃນລະບົບເອກະພາບຕ້ອງຊຳລະໜີ້ສິນທັງໝົດຂອງພວກເຂົາ, ແລະ ພຣະຜູ້ເປັນເຈົ້າຈະປົດປ່ອຍພວກເຂົາຈາກຄວາມເປັນທາດທາງການເງິນຂອງພວກເຂົາ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າ, ເພື່ອນຂອງເຮົາວ່າ ເຮົາຈະມອບຄຳແນະນຳ, ແລະ ບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າກ່ຽວກັບຊັບສິນທັງໝົດທີ່ເປັນຂອງລະບົບ ຊຶ່ງເຮົາໄດ້ບັນຊາໃຫ້ຈັດຕັ້ງ ແລະ ສະຖາປະນາຂຶ້ນ, ໃຫ້ເປັນ [ກ]ລະບົບເອກະພາບ, ແລະ ລະບົບອັນເປັນນິດເພື່ອຜົນປະໂຫຍດຂອງສາດສະໜາຈັກຂອງເຮົາ, ແລະ ເພື່ອຄວາມລອດຂອງມະນຸດ ຈົນກວ່າເຮົາມາ—

2 ດ້ວຍຄຳສັນຍາທີ່ຖາວອນ ແລະ ບໍ່ມີວັນປ່ຽນແປງ, ວ່າຕາບໃດທີ່ຄົນເຫລົ່ານັ້ນທີ່

**104** 1 *ກ* ຄພ 78:3–15. ຄມພ ລະບົບເອກະພາບ.

ເຮົາໄດ້ບັນຊາຍັງຊື່ສັດ ແລ້ວພວກເຂົາຈະ
ໄດ້ຮັບພອນດ້ວຍພອນຢ່າງຫລວງຫລາຍ;
3 ແຕ່ຕາບໃດທີ່ພວກເຂົາບໍ່ຊື່ສັດ ພວກ
ເຂົາກໍຢູ່ໃກ້ການສາບແຊ່ງ.
4 ສະນັ້ນ, ຕາບໃດທີ່ຜູ້ຮັບໃຊ້ຂອງເຮົາ
ບາງຄົນບໍ່ຮັກສາພຣະບັນຍັດ, ແຕ່ໄດ້ຝ່າ
ຝືນພັນທະສັນຍາໂດຍ [ກ]ຄວາມໂລບ, ແລະ
ດ້ວຍຖ້ອຍຄຳມານຍາ, ເຮົາຈຶ່ງໄດ້ສາບ
ແຊ່ງພວກເຂົາດ້ວຍການສາບແຊ່ງອັນສາ
ຫັດ ແລະ ຮ້າຍແຮງ.
5 ເພາະເຮົາ, ພຣະຜູ້ເປັນເຈົ້າ, ໄດ້ອອກ
ຄຳສັ່ງຢູ່ໃນໃຈຂອງເຮົາວ່າ ຕາບໃດທີ່ຜູ້
ຊາຍຄົນໃດທີ່ເປັນຂອງລະບົບຖືກພົບວ່າ
ເປັນຜູ້ລ່ວງລະເມີດ, ຫລື, ອີກຄຳໜຶ່ງ, ຈະ
ຝ່າຝືນພັນທະສັນຍາ ຊຶ່ງພວກເຈົ້າຖືກຜູກ
ມັດ, ເຂົາຈະຖືກສາບແຊ່ງໃນຊີວິດຂອງ
ເຂົາ, ແລະ ຈະຖືກຢຽບຢ່ຳໂດຍຄົນທີ່ເຮົາ
ປະສົງ;
6 ເພາະເຮົາ, ພຣະຜູ້ເປັນເຈົ້າ, ຈະບໍ່ຖືກ
[ກ]ເຍາະເຍີ້ຍໃນສິ່ງເຫລົ່ານີ້—
7 ແລະ ທັງໝົດນີ້ເພື່ອຄົນບໍລິສຸດໃນບັນ
ດາພວກເຈົ້າ ຈະບໍ່ຖືກກ່າວໂທດກັບຄົນທີ່
ບໍ່ທ່ຽງທຳ; ແລະ ເພື່ອວ່າຄົນຜິດໃນບັນດາ
ພວກເຈົ້າຈະໜີບໍ່ພົ້ນ; ເພາະເຮົາ, ພຣະຜູ້
ເປັນເຈົ້າ, ໄດ້ສັນຍາວ່າຈະມອບ [ກ]ມົງກຸດ
ແຫ່ງລັດສະໝີພາບໃຫ້ແກ່ພວກເຈົ້າທາງມື
ຂວາຂອງເຮົາ.
8 ສະນັ້ນ, ຕາບໃດທີ່ພວກເຈົ້າຖືກພົບ
ວ່າເປັນຜູ້ລ່ວງລະເມີດ, ພວກເຈົ້າຈະບໍ່ສາ
ມາດໜີພົ້ນຈາກພຣະພິໂລດຂອງເຮົາໃນຊີ
ວິດຂອງພວກເຈົ້າ.
9 ຕາບໃດທີ່ພວກເຈົ້າຖືກ [ກ]ຕັດອອກ
ເພາະການລ່ວງລະເມີດ, ພວກເຈົ້າຈະບໍ່
ສາມາດໜີພົ້ນຈາກ [ຂ]ຄວາມທຸກທໍລະມານ
ຂອງ [ຄ]ຊາຕານໄດ້ຈົນເຖິງວັນແຫ່ງການ
ໄຖ່.
10 ແລະ ບັດນີ້ເຮົາມອບອຳນາດໃຫ້ແກ່
ພວກເຈົ້ານັບແຕ່ຊົ່ວໂມງນີ້ໄປ, ວ່າຖ້າຫາກ
ພົບຄົນໜຶ່ງຄົນໃດໃນບັນດາພວກເຈົ້າ,
ຂອງລະບົບ, ຖືກພົບວ່າເປັນຜູ້ລ່ວງລະເມີດ
ແລະ ບໍ່ກັບໃຈຈາກຄວາມຊົ່ວຮ້າຍ, ເພື່ອ
ພວກເຈົ້າຈະສົ່ງເຂົາໄປສູ່ຄວາມທຸກທໍ
ລະມານຂອງຊາຕານ; ແລະ ເຂົາຈະບໍ່ມີ
ອຳນາດໃນ [ກ]ການນຳຄວາມຊົ່ວຮ້າຍມາສູ່
ພວກເຈົ້າ.
11 ເປັນຄວາມສະຫລຽວສະຫລາດຂອງ
ເຮົາ; ສະນັ້ນ, ເຮົາຈະມອບບັນຍັດຂໍ້ໜຶ່ງ
ໃຫ້ແກ່ພວກເຈົ້າ, ວ່າ ພວກເຈົ້າຈະວາງ
ລະບຽບຕົນເອງ ແລະ ກຳນົດສິ່ງທີ່ຕ້ອງ [ກ]ພິ
ທັກຮັກສາໃຫ້ທຸກຄົນ;
12 ເພື່ອວ່າທຸກໆຄົນຈະໄດ້ລາຍງານ
ເລື່ອງລາວກັບເຮົາເຖິງສິ່ງທີ່ເຂົາພິທັກຮັກ
ສາ ຊຶ່ງຖືກກຳນົດໃຫ້ເຂົາ.
13 ເພາະເປັນຄວາມເໝາະສົມທີ່ເຮົາ,
ພຣະຜູ້ເປັນເຈົ້າ, ຕ້ອງເຮັດໃຫ້ທຸກຄົນ [ກ]ຮັບ
ຜິດຊອບ, ເປັນ [ຂ]ຜູ້ພິທັກຮັກສາພອນຝ່າຍ
ແຜ່ນດິນໂລກ, ຊຶ່ງເຮົາໄດ້ສ້າງ ແລະ ຕຽມ
ໄວ້ໃຫ້ສິ່ງທີ່ມີຊີວິດຢູ່ຂອງເຮົາ.
14 ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ຢຶດຟ້າ
ສະຫວັນອອກ, ແລະ [ກ]ສ້າງແຜ່ນດິນໂລກ,
[ຂ]ຝີມືຂອງເຮົາເອງ; ແລະ ທຸກສິ່ງໃນນັ້ນ
ເປັນຂອງເຮົາທັງໝົດ.

4 *ກ* ຄມພ ໂລບ, ຄວາມໂລບ.
6 *ກ* ຄລຕ 6:7–9.
7 *ກ* ອຊຢ 62:3; ຄພ 76:56.
ຄມພ ລັດສະໝີພາບ.
9 *ກ* ຄມພ ການຖືກໄລ່ອອກ.
*ຂ* ຄພ 82:21.
*ຄ* ຄມພ ມານ.
10 *ກ* ຄພ 109:25–27.
11 *ກ* ຄພ 42:32.
ຄມພ ພິທັກຮັກສາ, ຜູ້ພິທັກ
ຮັກສາ, ການພິທັກຮັກສາ.
13 *ກ* ຄມພ ຮັບຜິດຊອບ, ຮູ້
ຈັກຮັບຜິດຊອບ, ຄວາມ
ຮັບຜິດຊອບ.
*ຂ* ຄພ 72:3–5, 16–22.
14 *ກ* ອຊຢ 42:5; 45:12.
ຄມພ ສ້າງ, ການສ້າງ.
*ຂ* ພສສ 19:1; 24:1.

15 ແລະ ມັນເປັນຈຸດປະສົງຂອງເຮົາທີ່
ຈະຈັດຫາໃຫ້ໄພ່ພົນຂອງເຮົາ, ເພາະທຸກ
ສິ່ງທັງປວງເປັນຂອງເຮົາ.
16 ແຕ່ມັນ ຕ້ອງເປັນໄປໃນ [ກ]ວິທີທາງ
ຂອງເຮົາເອງ; ແລະ ຈົ່ງເບິ່ງ ນີ້ຄືວິທີທາງທີ່
ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ອອກຄຳສັ່ງ ໃຫ້
ຈັດຫາໃຫ້ໄພ່ພົນຂອງເຮົາ, ເພື່ອ [ຂ]ຄົນຍາກ
ຈົນຈະຖືກຍົກຂຶ້ນສູງ, ໃນການນັ້ນຄົນຮັ່ງມີ
ຈະຖືກເຮັດໃຫ້ຕ່ຳລົງ.
17 ເພາະ [ກ]ແຜ່ນດິນໂລກເຕັມປ່ຽມ, ແລະ
ມັນມີພຽງພໍ ແລະ ເກີນພໍ; ແທ້ຈິງແລ້ວ,
ເຮົາໄດ້ຕຽມທຸກສິ່ງທັງປວງ, ແລະ ໃຫ້ລູກ
ຫລານມະນຸດເປັນ [ຂ]ຕົວແທນໃຫ້ແກ່ຕົນ
ເອງ.
18 ສະນັ້ນ, ຖ້າຫາກຄົນໃດຄົນໜຶ່ງຈະ
ຮັບຈາກ [ກ]ຄວາມອຸດົມສົມບູນ ຊຶ່ງເຮົາໄດ້
ເຮັດໄວ້, ແລະ ບໍ່ແບ່ງປັນສ່ວນຂອງເຂົາ,
ຕາມ [ຂ]ກົດຂອງພຣະກິດຕິຄຸນຂອງເຮົາ,
ໃຫ້ແກ່ [ຄ]ຄົນຍາກຈົນ ແລະ ຄົນຂັດສົນ,
ແລ້ວກັບຄົນຊົ່ວເຂົາຈະແຫງນໜ້າຂອງ
ເຂົາຂຶ້ນຈາກ [ງ]ນະລົກ, ຢູ່ໃນຄວາມທໍລະ
ມານ.
19 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າ, ກ່ຽວກັບຊັບສິນຂອງ
[ກ]ລະບົບ—
20 ໃຫ້ກຳນົດສະຖານທີ່ແກ່ຜູ້ຮັບໃຊ້
ຂອງເຮົາ ຊິດນີ ຣິກດອນ ບ່ອນທີ່ລາວອາ
ໄສຢູ່ຕອນນີ້, ແລະ ດິນຕອນຂອງໂຮງ
ຟອກໜັງໃຫ້ເປັນສິ່ງທີ່ລາວຕ້ອງພິທັກຮັກ
ສາ, ເພື່ອເປັນການຄ້ຳຈູນລາວໃນຂະນະ
ທີ່ລາວທຳງານຢູ່ໃນສວນອະງຸ່ນຂອງເຮົາ,
ແມ່ນແຕ່ຕາມຄວາມປະສົງຂອງເຮົາ, ເມື່ອ
ເຮົາຈະບັນຊາລາວ.
21 ແລະ ໃຫ້ທຸກສິ່ງທັງປວງເປັນໄປຕາມ
ຄຳແນະນຳຂອງລະບົບ, ແລະ ເຫັນພ້ອມ
ນຳກັນ ຫລື ເປັນສຽງຂອງລະບົບ, ຊຶ່ງອາ
ໄສຢູ່ໃນແຜ່ນດິນຂອງເມືອງເຄີດແລນ.
22 ແລະ ສິ່ງທີ່ຕ້ອງພິທັກຮັກສາ ແລະ
ພອນນີ້, ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ມອບໃຫ້
ແກ່ຜູ້ຮັບໃຊ້ຂອງເຮົາ ຊິດນີ ຣິກດອນ ເພື່ອ
ເປັນພອນແກ່ລາວ, ແລະ ລູກຫລານຫລັງ
ຈາກລາວ;
23 ແລະ ເຮົາຈະເພີ່ມທະວີພອນໃຫ້ແກ່
ລາວ, ຕາບໃດທີ່ລາວຍັງຖ່ອມຕົວຢູ່ຕໍ່ໜ້າ
ເຮົາ.
24 ແລະ ອີກເທື່ອໜຶ່ງ, ໃຫ້ກຳນົດທີ່ດິນ
ແກ່ຜູ້ຮັບໃຊ້ຂອງເຮົາ ມາຕິນ ແຮຣິສ, ໃຫ້
ລາວພິທັກຮັກສາ, ດິນຕອນທີ່ຜູ້ຮັບໃຊ້ຂອງ
ເຮົາ ຈອນ ຈອນສັນ ໄດ້ມາໃນການແລກ
ປ່ຽນມູນມໍລະດົກຂອງລາວແຕ່ກ່ອນ, ສຳ
ລັບລາວ ແລະ ລູກຫລານຂອງລາວຫລັງ
ຈາກລາວ;
25 ແລະ ຕາບໃດທີ່ລາວຍັງຊື່ສັດ, ເຮົາ
ຈະເພີ່ມທະວີພອນໃຫ້ລາວ ແລະ ລູກ
ຫລານຂອງລາວຫລັງຈາກລາວ.
26 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ມາຕິນ
ແຮຣິສ ອຸທິດຖວາຍເງິນຂອງລາວສຳລັບ
ການປະກາດຄຳຂອງເຮົາ, ຕາມທີ່ຜູ້ຮັບໃຊ້
ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຈະຊີ້ນຳ.
27 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງ
ເຮົາ ເຟຣ໌ເດຣິກ ຈີ ວິວລຽມສ໌ ໄດ້ຮັບບ່ອນ
ທີ່ລາວອາໄສຢູ່ໃນຕອນນີ້.

---

16 ກ ຄພ 105:5.
ຄມພ ຄວາມຜາສຸກ.
ຂ 1 ຊມອ 2:7–8;
ລກ 1:51–53; ຄພ 88:17.
17 ກ ຄພ 59:16–20.
ຄມພ ແຜ່ນດິນໂລກ.
ຂ ຄມພ ອຳເພີໃຈ.
18 ກ ລກ 3:11;
ຢກບ 2:15–16.
ຂ ຄພ 42:30.
ຄ ສພສ 14:21;
ມຊຢ 4:26;
ຄພ 52:40.
ງ ລກ 16:20–31.
19 ກ ຄມພ ລະບົບເອການພາບ.

28 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ອໍລີເວີ ຄາວເດີຣີ ໄດ້ຮັບດິນຕອນທີ່ຖັດຈາກເຮືອນ ຂອງລາວ, ຊຶ່ງຈະເປັນຫ້ອງການພິມ, ຊຶ່ງ ເປັນ ດິນ ຕອນ ໝາຍ ເລກໜຶ່ງ, ແລະ ດິນ ຕອນທີ່ພໍ່ຂອງລາວອາໄສຢູ່ນຳອີກ.

29 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ເຟຣ໌ເດຣິກ ຈີ ວິວລຽມສ໌ ແລະ ອໍລີເວີ ຄາວເດີຣີ ໄດ້ຮັບ ຫ້ອງການພິມ ແລະ ທຸກສິ່ງທັງປວງທີ່ກ່ຽວ ກັບມັນ.

30 ແລະ ສິ່ງນີ້ຈະເປັນສິ່ງທີ່ພວກເຂົາພິ ທັກຮັກສາ ຊຶ່ງຈະຖືກກຳນົດໃຫ້ແກ່ພວກ ເຂົາ.

31 ແລະ ຕາບໃດທີ່ພວກເຂົາຍັງຊື່ສັດ, ຈົ່ງເບິ່ງ ເຮົາຈະໃຫ້ພອນ, ແລະ ເພີ່ມທະວີ ພອນໃຫ້ພວກເຂົາ.

32 ແລະ ນີ້ ເປັນ ຈຸດ ເລີ່ມ ຕົ້ນ ຂອງ ການ ເປັນຜູ້ພິທັກຮັກສາ ຊຶ່ງເຮົາໄດ້ກຳນົດໃຫ້ ພວກ ເຂົາ, ສຳ ລັບ ພວກ ເຂົາ ແລະ ລູກ ຫລານຂອງພວກເຂົາຫລັງຈາກພວກເຂົາ.

33 ແລະ, ຕາບໃດທີ່ພວກເຂົາຍັງຊື່ສັດ, ເຮົາຈະເພີ່ມທະວີພອນໃຫ້ພວກເຂົາ ແລະ ລູກຫລານຂອງພວກເຂົາຫລັງຈາກພວກ ເຂົາ, ແມ່ນແຕ່ພອນຢ່າງຫລວງຫລາຍ.

34 ແລະ ອີກເທື່ອໜຶ່ງ, ໃຫ້ຜູ້ຮັບໃຊ້ຂອງ ເຮົາ ຈອນ ຈອນສັນ ໄດ້ຮັບເຮືອນບ່ອນທີ່ ລາວອາໄສຢູ່, ແລະ ມູນມໍລະດົກ, ທັງໝົດ ນອກຈາກທີ່ດິນບ່ອນທີ່ຖືກສະຫງວນໄວ້ ເພື່ອສ້າງ [ກ]ບ້ານຂອງເຮົາ, ຊຶ່ງກ່ຽວພັນກັບ ມູນມໍລະດົກນັ້ນ, ແລະ ທີ່ດິນຕອນເຫລົ່າ ນັ້ນຊຶ່ງໄດ້ບອກໄວ້ແລ້ວສຳລັບຜູ້ຮັບໃຊ້ ຂອງເຮົາ ອໍລີເວີ ຄາວເດີຣີ.

35 ແລະ ຕາບໃດທີ່ລາວຍັງຊື່ສັດ, ເຮົາ ຈະເພີ່ມທະວີພອນໃຫ້ລາວ.

36 ແລະ ມັນເປັນຄວາມປະສົງຂອງເຮົາ ທີ່ລາວຄວນຂາຍທີ່ດິນຕອນຕ່າງໆທີ່ຈັດໄວ້ ສຳລັບການສ້າງເມືອງຂອງ ໄພ່ພົນຂອງ ເຮົາ, ຕາບໃດທີ່ມັນຖືກເຮັດໃຫ້ເປັນທີ່ຮູ້ ຈັກແກ່ລາວໂດຍ [ກ]ສຸລະສຽງຂອງພຣະວິນ ຍານ, ແລະ ຕາມຄຳແນະນຳຂອງລະບົບ, ແລະ ໂດຍສຽງຂອງລະບົບ.

37 ແລະ ນີ້ເປັນຈຸດເລີ່ມຕົ້ນຂອງການ ເປັນຜູ້ພິທັກຮັກສາ ຊຶ່ງເຮົາໄດ້ກຳນົດໃຫ້ ລາວ, ເພື່ອເປັນພອນໃຫ້ລາວ ແລະ ລູກ ຫລານຂອງລາວຫລັງຈາກລາວ.

38 ແລະ ຕາບໃດທີ່ລາວຍັງຊື່ສັດ, ເຮົາ ຈະ ເພີ່ມ ທະ ວີ ພອນ ໃຫ້ ລາວ ຢ່າງ ຫລວງ ຫລາຍ.

39 ແລະ ອີກເທື່ອໜຶ່ງ, ໃຫ້ກຳນົດເຮືອນ ແລະ ທີ່ ດິນ ຕອນ ທີ່ ຜູ້ ຮັບ ໃຊ້ ຂອງ ເຮົາ [ກ]ນິວເອັນ ເຄ ວິດນີ ອາໄສຢູ່ໃນຕອນນີ້ໃຫ້ ແກ່ລາວ, ແລະ ທີ່ດິນ ແລະ ອາຄານບ່ອນທີ່ ເຮັດເປັນຮ້ານຄ້າ, ແລະ ທີ່ດິນຕອນທີ່ຢູ່ແຈ ເບື້ອງໃຕ້ຂອງຮ້ານຄ້າ, ແລະ ທີ່ດິນຕອນທີ່ ມີເຕົາເຜົາຕັ້ງຢູ່ນຳອີກ.

40 ແລະ ທຸກສິ່ງທັງປວງນີ້ ເຮົາໄດ້ກຳນົດ ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ນິວເອັນ ເຄ ວິດນີ ໃຫ້ເປັນຜູ້ພິທັກຮັກສາ, ເພື່ອເປັນພອນໃຫ້ ລາວ ແລະ ລູກຫລານຂອງລາວຫລັງຈາກ ລາວ, ເພື່ອຜົນປະໂຫຍດຂອງຮ້ານຄ້າຂອງ ລະບົບຂອງເຮົາ ຊຶ່ງເຮົາໄດ້ຈັດຕັ້ງຂຶ້ນສຳ ລັບສະເຕກຂອງເຮົາຢູ່ໃນແຜ່ນດິນຂອງ ເມືອງເຄີດແລນ.

41 ແທ້ ຈິງ ແລ້ວ, ຕາມ ຄວາມ ຈິງ, ນີ້ ຄື ການພິທັກຮັກສາຊຶ່ງເຮົາໄດ້ກຳນົດໃຫ້ແກ່ ຜູ້ຮັບໃຊ້ຂອງເຮົາ ເອັນ ເຄ ວິດນີ, ແມ່ນແຕ່ ຮ້ານຄ້າທັງໝົດນີ້, ລາວ ແລະ [ກ]ຕົວແທນ ຂອງລາວ, ແລະ ລູກຫລານຂອງລາວຫລັງ ຈາກລາວ.

34 *ກ* ຄພ 94:3, 10.
36 *ກ* ຄມພ ເປີດເຜີຍ, ການເປີດເຜີຍ.
39 *ກ* ຄມພ ວິດນີ, ນິວເອັນ ເຄ.
41 *ກ* ຄພ 84:112–113.

42 ແລະ ຕາບ ໃດ ທີ່ ລາວ ຍັງ ຊື່ ສັດ ໃນ ການຮັກສາບັນຍັດຂອງເຮົາ, ຊຶ່ງເຮົາໄດ້ ມອບໃຫ້ແກ່ລາວ, ເຮົາຈະເພີ່ມທະວີພອນ ໃຫ້ລາວ ແລະ ລູກຫລານຂອງລາວຫລັງ ຈາກ ລາວ, ແມ່ນ ແຕ່ ພອນ ຢ່າງ ຫລວງ ຫລາຍ.

43 ແລະ ອີກເທື່ອໜຶ່ງ, ໃຫ້ກຳນົດທີ່ດິນ ແກ່ ຜູ້ ຮັບ ໃຊ້ ຂອງ ເຮົາ ໂຈເຊັບ ສະມິດ, ຜູ້ລູກ, ດິນ ຕອນ ຈັດ ໄວ້ ສຳ ລັບ ການ ສ້າງ ບ້ານຂອງເຮົາ, ຊຶ່ງຍາວປະມານສອງຮ້ອຍ ແມັດ ແລະ ກວ້າງປະມານຫົກສິບ ແມັດ, ແລະ ມູນມໍລະດົກບ່ອນທີ່ພໍ່ຂອງລາວອາ ໄສຢູ່ໃນຕອນນີ້ນຳອີກ;

44 ແລະ ນີ້ ເປັນ ຈຸດ ເລີ່ມ ຕົ້ນ ຂອງ ການ ເປັນຜູ້ພິທັກຮັກສາ ຊຶ່ງເຮົາໄດ້ກຳນົດໄວ້ ໃຫ້ແກ່ລາວ, ເພື່ອເປັນພອນໃຫ້ແກ່ລາວ, ແລະ ໃຫ້ແກ່ພໍ່ຂອງລາວ.

45 ເພາະຈົ່ງເບິ່ງ, ເຮົາໄດ້ສະຫງວນມູນ ມໍລະດົກໄວ້ໃຫ້ [ກ]ພໍ່ຂອງລາວ, ເພື່ອຄ້ຳຈູນ ລາວ; ສະນັ້ນ ລາວຈຶ່ງຖືກນັບເຂົ້າກັບຄອບ ຄົວຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ.

46 ແລະ ເຮົາຈະເພີ່ມທະວີພອນໃຫ້ຄອບ ຄົວຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ຜູ້ລູກ, ຕາບໃດທີ່ລາວຍັງຊື່ສັດ, ແມ່ນແຕ່ ພອນຢ່າງຫລວງຫລາຍ.

47 ແລະ ບັດນີ້, ເຮົາຈະມອບບັນຍັດຂໍ້ ໜຶ່ງໃຫ້ແກ່ພວກເຈົ້າກ່ຽວກັບຊີໂອນ, ວ່າ ພວກ ເຈົ້າ ຈະ ບໍ່ ຖືກ ຜູກ ມັດ ເປັນ ລະ ບົບ ເອກະພາບກັບພີ່ນ້ອງຂອງພວກເຈົ້າໃນ ຊີໂອນອີກຕໍ່ໄປ, ພຽງແຕ່ໂດຍວິທີນີ້—

48 ຫລັງຈາກພວກເຈົ້າໄດ້ວາງລະບຽບ ແລ້ວ, ພວກເຈົ້າຈະຖືກເອີ້ນວ່າ ລະບົບເອ ກະພາບຂອງ [ກ]ສະເຕກແຫ່ງຊີໂອນ, ເມືອງ ແຫ່ງເຄີດແລນ. ແລະ ອ້າຍນ້ອງຂອງພວກ ເຈົ້າ, ຫລັງຈາກພວກເຂົາໄດ້ວາງລະບຽບ ແລ້ວ, ຈະຖືກເອີ້ນວ່າ ລະບົບເອກະພາບ ຂອງເມືອງຊີໂອນ.

49 ແລະ ພວກເຂົາຈະຖືກວາງລະບຽບ ໃນຊື່ຂອງພວກເຂົາເອງ, ແລະ ໃນຊື່ຂອງ ຕົນເອງ; ແລະ ພວກເຂົາຈະດຳເນີນງານ ໃນຊື່ຂອງຕົນເອງ, ແລະ ໃນຊື່ຂອງພວກ ເຂົາເອງ;

50 ແລະ ພວກເຈົ້າຄວນດຳເນີນງານໃນ ຊື່ຂອງຕົນເອງ, ແລະ ໃນຊື່ຂອງພວກເຈົ້າ ເອງ.

51 ແລະ ສິ່ງນີ້ ເຮົາ ໄດ້ ບັນ ຊາ ໃຫ້ ເຮັດ ເພື່ອຄວາມລອດຂອງພວກເຈົ້າ, ແລະ ເພື່ອ ຄວາມລອດຂອງພວກເຂົານຳອີກ, ຊຶ່ງເປັນ ຜົນຈາກການທີ່ພວກເຂົາໄດ້ຖືກ [ກ]ຂັບໄລ່ ອອກໄປ ແລະ ສິ່ງຊຶ່ງຈະມາເຖິງ.

52 [ກ]ພັນທະສັນຍາທີ່ຝ່າຝືນໂດຍການ ລ່ວງລະເມີດ, ໂດຍ [ຂ]ຄວາມໂລບ ແລະ ດ້ວຍຖ້ອຍຄຳມານຍາ—

53 ສະນັ້ນ, ພວກເຈົ້າຈຶ່ງບໍ່ມີລະບົບເອ ກະພາບກັບພວກອ້າຍນ້ອງຂອງພວກເຈົ້າ, ວ່າພວກເຈົ້າບໍ່ຖືກຜູກມັດໄວ້ກັບພວກເຂົາ ຍົກເວັ້ນແຕ່ຈົນເຖິງເວລານີ້, ພຽງແຕ່ໂດຍ ວິທີນີ້, ດັ່ງທີ່ເຮົາໄດ້ກ່າວ, ໂດຍເງິນກູ້ຊຶ່ງ ຈະເຫັນພ້ອມກັນໂດຍລະບົບນີ້ໃນສະພາ, ຕາມສະພາບການຂອງພວກເຈົ້າຈະອຳ ນວຍ ແລະ ສຽງຂອງສະພາຈະແນະນຳ.

54 ແລະ ອີກເທື່ອໜຶ່ງ, ເຮົາຈະມອບບັນ ຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າກ່ຽວກັບການ ເປັນຜູ້ພິທັກຮັກສາຂອງພວກເຈົ້າ ຊຶ່ງເຮົາ ໄດ້ກຳນົດແກ່ພວກເຈົ້າ.

45 *ກ* ຄພ 90:20.
ຄມພ ສະມິດ, ໂຈເຊັບ, ຜູ້ພໍ່.
48 *ກ* ຄພ 82:13; 94:1; 109:59.
ຄມພ ສະເຕກ.
51 *ກ* ຄພ 109:47.
52 *ກ* ຄມພ ພັນທະສັນຍາ.
*ຂ* ຄມພ ໂລບ, ຄວາມໂລບ.

55 ຈົ່ງເບິ່ງ, ຊັບສິນທັງໝົດເປັນຂອງເຮົາ, ຖ້າບໍ່ດັ່ງນັ້ນສັດທາຂອງພວກເຈົ້າກໍໄຮ້ປະໂຫຍດ, ແລະ ພວກເຈົ້າຈະຖືກພົບວ່າເປັນຄົນໜ້າຊື່ໃຈຄົດ, ແລະ ພັນທະສັນຍາທີ່ພວກເຈົ້າໄດ້ເຮັດໄວ້ກັບເຮົາກໍຖືກຝ່າຝືນ;

56 ແລະ ຖ້າຫາກຊັບສິນເປັນຂອງເຮົາ, ແລ້ວພວກເຈົ້າກໍເປັນ [ກ]ຜູ້ພິທັກຮັກສາ; ຖ້າບໍ່ດັ່ງນັ້ນພວກເຈົ້າກໍບໍ່ໄດ້ເປັນຜູ້ພິທັກຮັກສາ.

57 ແຕ່, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ, ເຮົາໄດ້ກຳນົດໃຫ້ພວກເຈົ້າເປັນຜູ້ພິທັກຮັກສາບ້ານເຮືອນຂອງເຮົາ, ແມ່ນແຕ່ເປັນຜູ້ພິທັກຮັກສາ.

58 ແລະ ເພື່ອຈຸດປະສົງນີ້ ເຮົາຈຶ່ງໄດ້ບັນຊາພວກເຈົ້າໃຫ້ວາງລະບຽບຕົນເອງ, ແມ່ນແຕ່ໃຫ້ພິມ [ກ]ຖ້ອຍຄຳຂອງເຮົາ, ຄວາມສົມບູນຂອງພຣະຄຳພີຂອງເຮົາ, ການເປີດເຜີຍຊຶ່ງເຮົາໄດ້ມອບໃຫ້ແກ່ພວກເຈົ້າ, ແລະ ຊຶ່ງເຮົາຈະມອບໃຫ້ພວກເຈົ້າເປັນບາງຄັ້ງຫລັງຈາກນີ້ໄປ—

59 ເພື່ອຈຸດປະສົງຂອງການສ້າງສາສາດສະໜາຈັກ ແລະ ອານາຈັກຂອງເຮົາຢູ່ເທິງແຜ່ນດິນໂລກ, ແລະ ເພື່ອຕຽມຜູ້ຄົນຂອງເຮົາສຳລັບ [ກ]ເວລາທີ່ເຮົາຈະ [ຂ]ຢູ່ກັບພວກເຂົາ, ຊຶ່ງໃກ້ຈະມາເຖິງແລ້ວ.

60 ແລະ ພວກເຈົ້າຄວນຕຽມສະຖານທີ່ສຳລັບຄັງໄວ້ເພື່ອຕົນເອງ, ແລະ ໃຫ້ອຸທິດຖວາຍມັນແດ່ນາມຂອງເຮົາ.

61 ແລະ ພວກເຈົ້າຕ້ອງກຳນົດບາງຄົນໃນບັນດາພວກເຈົ້າໃຫ້ເປັນຜູ້ດູແລຄັງ, ແລະ ລາວຈະຕ້ອງຖືກແຕ່ງຕັ້ງສູ່ພອນນີ້.

62 ແລະ ຈະຕ້ອງມີຕາປະທັບຄັງ, ແລະ ທຸກສິ່ງທັງປວງທີ່ສັກສິດຈະຖືກສົ່ງມາເຂົ້າຄັງ; ແລະ ບໍ່ມີຄົນໃດໃນບັນດາພວກເຈົ້າຈະເອີ້ນມັນວ່າເປັນຂອງຕົນເອງ; ຫລື ສ່ວນໃດຂອງມັນ, ເພາະມັນຈະເປັນຂອງພວກເຈົ້າທຸກຄົນນຳກັນ.

63 ແລະ ເຮົາມອບມັນໃຫ້ແກ່ພວກເຈົ້ານັບແຕ່ຊົ່ວໂມງນີ້ໄປ; ແລະ ບັດນີ້ຈົ່ງດູແລມັນ, ວ່າພວກເຈົ້າຈະໄປ ແລະ ໃຊ້ສິ່ງທີ່ຕ້ອງພິທັກຮັກສາ ຊຶ່ງເຮົາໄດ້ກຳນົດໃຫ້ແກ່ພວກເຈົ້າ, ຍົກເວັ້ນແຕ່ສິ່ງທີ່ສັກສິດ, ເພື່ອຈຸດປະສົງຂອງການພິມສິ່ງສັກສິດເຫລົ່ານີ້ທີ່ເຮົາໄດ້ກ່າວມານັ້ນ.

64 ແລະ [ກ]ຜົນປະໂຫຍດຂອງສິ່ງສັກສິດຈະຕ້ອງເກັບໄວ້ຢູ່ໃນຄັງ, ແລະ ໃຫ້ຕິຕາປະທັບໄວ້; ແລະ ມັນຈະບໍ່ຖືກໃຊ້ ຫລື ເອົາອອກໄປຈາກຄັງໂດຍຄົນໃດ, ທັງບໍ່ໃຫ້ແກະຕາປະທັບທີ່ຈະຕິໄວ້ອອກຈາກມັນ, ພຽງແຕ່ເຮັດໄດ້ໂດຍສຽງຂອງລະບົບ, ຫລື ໂດຍຄຳບັນຊາເທົ່ານັ້ນ.

65 ແລະ ພວກເຈົ້າຈະຮັກສາຜົນປະໂຫຍດຂອງສິ່ງສັກສິດຢູ່ໃນຄັງໄວ້ດັ່ງນັ້ນ, ເພື່ອຈຸດປະສົງທີ່ສັກສິດ ແລະ ບໍລິສຸດເທົ່ານັ້ນ.

66 ແລະ ມັນຈະຖືກເອີ້ນວ່າຄັງສັກສິດຂອງພຣະຜູ້ເປັນເຈົ້າ; ແລະ ຖືກຕິຕາປະທັບໄວ້ ເພື່ອວ່າມັນຈະສັກສິດ ແລະ ຖືກອຸທິດຖວາຍໃຫ້ແດ່ພຣະຜູ້ເປັນເຈົ້າ.

67 ແລະ ອີກເທື່ອໜຶ່ງ, ຈະມີອີກຄັງໜຶ່ງຖືກຈັດຕຽມໄວ້, ແລະ ນາຍຄັງຈະຖືກກຳນົດໃຫ້ດູແລຄັງ, ແລະ ຈະຖືກຕິຕາປະທັບໄວ້.

68 ແລະ ເງິນທັງໝົດທີ່ພວກເຈົ້າໄດ້ຮັບໃນການເປັນຜູ້ພິທັກຮັກສາຂອງພວກເຈົ້າ, ໂດຍການເຮັດໃຫ້ຊັບສິນຊຶ່ງເຮົາໄດ້ກຳນົດ

56 *ກ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
58 *ກ* ຄມພ ການແປຂອງໂຈເຊັບ ສະມິດ (ປຈສ).
59 *ກ* ຄມພ ພັນປີ.
*ຂ* ຄພ 1:35–36; 29:9–11.
64 *ກ* ອສ ກຳໄລ, ເງິນຫາລາຍໄດ້.

ໃຫ້ພວກເຈົ້າເກີດຜົນ, ໃນບ້ານເຮືອນ, ໃນ
ທີ່ດິນ, ຫລື ໃນຝູງສັດລ້ຽງ, ຫລື ໃນທຸກສິ່ງ
ຍົກເວັ້ນແຕ່ການຂຽນທີ່ບໍລິສຸດ ແລະ ສັກ
ສິດເທົ່ານັ້ນ, ຊຶ່ງເຮົາໄດ້ສະຫງວນໄວ້ໃຫ້
ເຮົາເອງສຳລັບຈຸດປະສົງທີ່ບໍລິສຸດ ແລະ
ສັກສິດ, ຈົ່ງນຳມັນເຂົ້າຄັງທັນທີທີ່ພວກເຈົ້າ
ໄດ້ຮັບເງິນ, ເປັນຈຳນວນໜຶ່ງຮ້ອຍ, ຫລື
ຫ້າສິບ, ຫລື ຊາວ, ຫລື ສິບ, ຫລື ຫ້າ.
69 ຫລື ອີກຄຳໜຶ່ງ, ຖ້າຫາກຄົນໃດໃນ
ບັນດາພວກເຈົ້າໄດ້ຮັບຫ້າໂດລາ ກໍໃຫ້ເຂົາ
ນຳມັນເຂົ້າຄັງ; ຫລື ຖ້າຫາກເຂົາໄດ້ສິບ,
ຫລື ຊາວ, ຫລື ຫ້າສິບ, ຫລື ໜຶ່ງຮ້ອຍ, ກໍໃຫ້
ເຂົາເຮັດເຊັ່ນນັ້ນຄືກັນ;
70 ແລະ ບໍ່ໃຫ້ຄົນໃດໃນບັນດາພວກ
ເຈົ້າກ່າວວ່າມັນເປັນຂອງຕົນ; ເພາະມັນຈະ
ບໍ່ຖືກເອີ້ນວ່າເປັນຂອງເຂົາ, ຫລື ສ່ວນໃດ
ຂອງມັນ.
71 ແລະ ບໍ່ໃຫ້ໃຊ້ສ່ວນໃດຂອງມັນ, ຫລື
ເອົາອອກໄປຈາກຄັງ, ພຽງແຕ່ເຮັດໄດ້
ໂດຍສຽງ ແລະ ການເຫັນຊອບນຳກັນຂອງ
ລະບົບເທົ່ານັ້ນ.
72 ແລະ ນີ້ຈະເປັນສຽງ ແລະ ການເຫັນ
ພ້ອມນຳກັນຂອງລະບົບ—ຄືຄົນໃດຄົນ
ໜຶ່ງໃນບັນດາພວກເຈົ້າ ຈະກ່າວກັບນາຍ
ຄັງວ່າ: ຂ້າພະເຈົ້າຕ້ອງການເທົ່ານີ້ເພື່ອ
ຊ່ວຍເຫລືອຂ້າພະເຈົ້າໃນການເປັນຜູ້ພິ
ທັກຮັກສາຂອງຂ້າພະເຈົ້າ—
73 ຖ້າຫາກເປັນຫ້າໂດລາ, ຫລື ຖ້າຫາກ
ເປັນສິບໂດລາ, ຫລື ຊາວ, ຫລື ຫ້າສິບ, ຫລື
ໜຶ່ງຮ້ອຍ, ແລ້ວນາຍຄັງຈະມອບເງິນທີ່
ລາວຂໍຮ້ອງໃຫ້ລາວ ເພື່ອຊ່ວຍເຫລືອລາວ
ໃນການເປັນຜູ້ພິທັກຮັກສາຂອງລາວ—
74 ຈົນກວ່າລາວຈະຖືກພົບວ່າເປັນຄົນ
ລ່ວງລະເມີດ, ແລະ ມັນຖືກສະແດງໃຫ້
ປະຈັກຢູ່ຕໍ່ໜ້າສະພາຂອງລະບົບຢ່າງແຈ່ມ
ແຈ້ງວ່າລາວບໍ່ຊື່ສັດ ແລະ ເປັນຜູ້ພິທັກຮັກ
ສາທີ່ [ກ]ບໍ່ສະຫລາດ.
75 ແຕ່ຕາບໃດທີ່ລາວຍັງເປັນສະມາຊິກ
ຢ່າງສົມບູນ, ແລະ ຊື່ສັດ ແລະ ສະຫລາດ
ໃນການເປັນຜູ້ພິທັກຮັກສາຂອງລາວ, ສິ່ງ
ນີ້ຈະເປັນເຄື່ອງໝາຍຂອງລາວຕໍ່ນາຍຄັງ
ເພື່ອວ່ານາຍຄັງຈະບໍ່ກັກເງິນໄວ້.
76 ແຕ່ໃນກໍລະນີທີ່ມີການລ່ວງລະເມີດ,
ນາຍຄັງຈະຢູ່ພາຍໃຕ້ສະພາ ແລະ ສຽງ
ຂອງລະບົບ.
77 ແລະ ໃນກໍລະນີທີ່ນາຍຄັງຖືກພົບວ່າ
ເປັນຄົນບໍ່ຊື່ສັດ ແລະ ເປັນຜູ້ພິທັກຮັກສາ
ທີ່ບໍ່ສະຫລາດ, ລາວຈະຢູ່ພາຍໃຕ້ສະພາ
ແລະ ສຽງຂອງລະບົບ, ແລະ ຈະຖືກຍ້າຍ
ອອກຈາກບ່ອນຂອງລາວ, ແລະ [ກ]ຄົນອື່ນ
ຈະຖືກແຕ່ງຕັ້ງຂຶ້ນແທນລາວ.
78 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າ, ກ່ຽວກັບ
ໜີ້ສິນຂອງພວກເຈົ້າ—ຈົ່ງເບິ່ງ ມັນເປັນ
ຄວາມປະສົງຂອງເຮົາທີ່ພວກເຈົ້າຈະ
[ກ]ຈ່າຍ [ຂ]ໜີ້ທັງໝົດຂອງພວກເຈົ້າ.
79 ແລະ ມັນເປັນຄວາມປະສົງຂອງເຮົາ
ທີ່ພວກເຈົ້າຈະ [ກ]ຖ່ອມຕົວລົງຢູ່ຕໍ່ໜ້າເຮົາ,
ແລະ ຮັບເອົາພອນນີ້ໂດຍ [ຂ]ຄວາມພາກ
ພຽນ ແລະ ຄວາມຖ່ອມຕົວ ແລະ ການອະ
ທິຖານດ້ວຍສັດທາຂອງພວກເຈົ້າ.
80 ແລະ ຕາບໃດທີ່ພວກເຈົ້າຍັງພາກ
ພຽນ ແລະ ຖ່ອມຕົວ, ແລະ ມີ [ກ]ການອະ
ທິຖານດ້ວຍສັດທາ, ຈົ່ງເບິ່ງ, ເຮົາຈະເຮັດ
ໃຫ້ຫົວໃຈຂອງຄົນເຫລົ່ານັ້ນທີ່ພວກເຈົ້າ
ເປັນໜີ້ສິນອ່ອນລົງ, ຈົນກວ່າເຮົາຈະສົ່ງ

74 *ກ* ລກ 16:1–12.
77 *ກ* ຄພ 107:99–100.
78 *ກ* ຄພ 42:54.
*ຂ* ຄມພ ໜີ້.
79 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຂ* ຄມພ ພາກພຽນ, ຄວາມພາກພຽນ.
80 *ກ* ຢກບ 5:15.

ເງື່ອນ ໄຂ ມາ ໃຫ້ ພວກ ເຈົ້າ ເພື່ອ ປົດ ປ່ອຍ ພວກເຈົ້າ.

81 ສະນັ້ນ ຈົ່ງຂຽນຢ່າງໄວເຖິງນິວຢອກ ແລະ ຂຽນຕາມສິ່ງທີ່ [ກ]ວິນຍານຂອງເຮົາ ຈະບອກ; ແລະ ເຮົາຈະເຮັດໃຫ້ຫົວໃຈຂອງ ຄົນເຫລົ່ານັ້ນທີ່ພວກເຈົ້າເປັນໜີ້ສິນອ່ອນ ລົງ, ເພື່ອຄວາມຄິດທີ່ຈະນຳຄວາມທຸກມາ ໃຫ້ພວກເຈົ້າຈະຖືກເອົາອອກໄປຈາກຈິດ ໃຈຂອງພວກເຂົາ.

82 ແລະ ຕາບໃດທີ່ພວກເຈົ້າຍັງ [ກ]ຖ່ອມ ຕົວ ແລະ ຊື່ສັດ ແລະ ເອີ້ນຫານາມຂອງ ເຮົາ, ຈົ່ງເບິ່ງ, ເຮົາຈະເຮັດໃຫ້ພວກເຈົ້າມີ [ຂ]ໄຊຊະນະ.

83 ເຮົາໃຫ້ຄຳສັນຍາແກ່ພວກເຈົ້າ, ວ່າ ພວກເຈົ້າຈະຖືກປົດປ່ອຍເທື່ອນີ້ອອກຈາກ ຄວາມເປັນທາດຂອງພວກເຈົ້າ.

84 ຕາບໃດທີ່ພວກເຈົ້າມີໂອກາດທີ່ຈະກູ້ ຢືມເງິນເປັນຮ້ອຍ, ຫລື ເປັນພັນ, ແມ່ນແຕ່ ຈົນເຖິງພວກເຈົ້າໄດ້ກູ້ຢືມເງິນພຽງພໍເພື່ອ ປົດປ່ອຍພວກເຈົ້າອອກຈາກຄວາມເປັນ ທາດ, ນີ້ເປັນສິດທິພິເສດຂອງພວກເຈົ້າ.

85 ແລະ ໃຫ້ສັນຍາຊັບສິນຊຶ່ງເຮົາໄດ້ ມອບໄວ້ໃນມືຂອງພວກເຈົ້າເປັນສິ່ງປະກັນ, ເທື່ອນີ້ເທົ່ານັ້ນ, ໂດຍການໃຫ້ຊື່ຂອງພວກ ເຈົ້າຕາມການເຫັນຊອບນຳກັນ ຫລື ບໍ່ດັ່ງ ນັ້ນ, ກໍໃຫ້ເປັນດັ່ງທີ່ພວກເຈົ້າເຫັນວ່າດີ.

86 ເຮົາມອບສິດທິພິເສດນີ້ໃຫ້ແກ່ພວກ ເຈົ້າ, ເທື່ອນີ້ເທົ່ານັ້ນ, ແລະ ຈົ່ງເບິ່ງ, ຖ້າ ຫາກພວກເຈົ້າເລີ່ມເຮັດຕາມສິ່ງທີ່ເຮົາໄດ້ ວາງໄວ້ຢູ່ຕໍ່ໜ້າພວກເຈົ້າ, ຕາມບັນຍັດ ຂອງເຮົາ, ສິ່ງເຫລົ່ານີ້ທັງໝົດເປັນຂອງ ເຮົາ, ແລະ ພວກເຈົ້າເປັນຜູ້ພິທັກຮັກສາ ຂອງເຮົາ, ແລະ ນາຍຈະບໍ່ຍອມໃຫ້ໂຈນມາ ເຈາະບ້ານເຮືອນຂອງລາວ. ແມ່ນເປັນດັ່ງ ນັ້ນ. ອາແມນ.

# ພາກທີ 105

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ແມ່ນ້ຳຟິດຊິງ, ລັດມີເຊີຣີ, ວັນທີ 22 ເດືອນມິຖຸນາ, 1834. ພາຍໃຕ້ການນຳພາຂອງສາດສະດາ, ໄພ່ພົນຂອງພຣະເຈົ້າຈາກລັດໂອໄຮໂອ ແລະ ຈາກບ່ອນອື່ນໆ ໄດ້ເດີນຂະບວນໄປລັດມີເຊີຣີ ໃນການໄປສຳຫລວດ ຊຶ່ງຕໍ່ມາເປັນທີ່ຮູ້ຈັກກັນວ່າ ຄ້າຍຊີໂອນ. ຈຸດປະສົງຂອງເຂົາເຈົ້າ ແມ່ນເພື່ອພາໄພ່ພົນຂອງພຣະເຈົ້າ ທີ່ຖືກໄລ່ໜີຈາກລັດມີເຊີຣີ ກັບຄືນໄປຫາທີ່ດິນຂອງເຂົາເຈົ້າ ຢູ່ເຂດແຈັກສັນ. ປະຊາຊົນຂອງລັດມີເຊີຣີຜູ້ໄດ້ຂົ່ມເຫັງໄພ່ພົນຂອງພຣະເຈົ້າ ເກີດຄວາມຢ້ານກົວກັບການໂຕ້ຕອບຂອງຄ້າຍຊີໂອນ ແລະ ໄດ້ວາງແຜນທີ່ຈະໂຈມຕີໄພ່ພົນຂອງພຣະເຈົ້າທີ່ອາໄສຢູ່ເຂດຄະເລ, ລັດມີເຊີຣີ. ຫລັງຈາກເຈົ້າລັດມີເຊີຣີ ໄດ້ຖອນຄຳສັນຍາຂອງເພິ່ນ ທີ່ຈະຊ່ວຍເຫລືອໄພ່ພົນຂອງພຣະເຈົ້າ, ໂຈເຊັບ ສະມິດ ຈຶ່ງໄດ້ຮັບການເປີດເຜີຍນີ້.*

*1–5, ຊີໂອນຈະຖືກສ້າງຂຶ້ນໂດຍຄວາມສອດຄ່ອງກັບກົດຂອງຊັ້ນສູງ; 6–13, ການໄຖ່ຊີໂອນຈະຊັກຊ້າອອກໄປຊົ່ວໄລຍະໜຶ່ງ; 14–19, ພຣະຜູ້ເປັນເຈົ້າຈະຕໍ່ສູ້ໃນການສູ້ຮົບຂອງຊີໂອນ; 20–26, ໄພ່ພົນຂອງພຣະເຈົ້າຕ້ອງສະຫລາດ ແລະ ບໍ່ເວົ້າອວດອ້າງ*

81 *ກ* ຄມພ ພຣະວິນຍານບໍລິສຸດ. | 82 *ກ* ລກ 14:11; ຄພ 67:10. | *ຂ* ຄພ 103:36.

*ກ່ຽວກັບວຽກງານອັນຍິ່ງໃຫຍ່ໃນຂະນະທີ່ພວກເຂົາມາເຕົ້າໂຮມກັນ; 27–30, ຄວນຊື້ທີ່ດິນໃນເຂດແຈັກສັນ ແລະ ໃນເຂດໃກ້ຄຽງນັ້ນ; 31–34, ພວກແອວເດີຕ້ອງຮັບເອົາຂອງປະທານສັກສິດຢູ່ໃນບ້ານຂອງພຣະຜູ້ເປັນເຈົ້າໃນເມືອງເຄີດແລນ; 35–37, ໄພ່ພົນຂອງພຣະເຈົ້າຜູ້ຖືກເອີ້ນ ແລະ ຖືກເລືອກ ຈະໄດ້ຮັບການຊຳລະໃຫ້ບໍລິສຸດ; 38–41, ໄພ່ພົນຂອງພຣະເຈົ້າຕ້ອງຍົກປ້າຍສັນຍານແຫ່ງສັນຕິພາບຂຶ້ນຕໍ່ໂລກ.*

1 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າຜູ້ໄດ້ມາຊຸມນຸມກັນເພື່ອພວກເຈົ້າຈະ
ໄດ້ຮູ້ຈັກຄວາມປະສົງຂອງເຮົາກ່ຽວກັບ
[ກ]ການໄຖ່ຜູ້ຄົນທີ່ເປັນທຸກຂອງເຮົາ—
2 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ ຖ້າ
ຫາກບໍ່ເປັນເພາະ [ກ]ການລ່ວງລະເມີດຂອງ
ຜູ້ຄົນຂອງເຮົາ, ໂດຍກ່າວກ່ຽວກັບສາດສະ
ໜາຈັກ ແລະ ບໍ່ແມ່ນສ່ວນບຸກຄົນ, ພວກ
ເຂົາອາດໄດ້ຮັບການໄຖ່ແລ້ວແມ່ນແຕ່ໃນ
ຕອນນີ້.
3 ແຕ່ຈົ່ງເບິ່ງ, ພວກເຂົາບໍ່ໄດ້ຮຽນຮູ້ທີ່ຈະ
ເປັນຄົນເຊື່ອຟັງຕໍ່ສິ່ງທີ່ເຮົາໄດ້ຮຽກຮ້ອງ
ຈາກມືຂອງພວກເຂົາ, ແຕ່ເຕັມໄປດ້ວຍ
ຄວາມຊົ່ວຮ້າຍນາໆປະການ, ແລະ ບໍ່ໄດ້
[ກ]ໃຫ້ເຂົ້າຂອງ ຂອງພວກເຂົາແກ່ຄົນຍາກ
ຈົນ ແລະ ຄົນທີ່ເປັນທຸກໃນບັນດາພວກ
ເຂົາ, ດັ່ງທີ່ໄພ່ພົນຂອງພຣະເຈົ້າຄວນເຮັດ;
4 ແລະ ບໍ່ ໄດ້ [ກ]ພ້ອມ ໃຈ ກັນ ຕາມ ສະ
ຫະພາບດັ່ງທີ່ກົດຂອງອານາຈັກຊັ້ນສູງ
ຮຽກຮ້ອງ;
5 ແລະ [ກ]ຊີໂອນບໍ່ສາມາດຖືກສ້າງຂຶ້ນ
[ຂ]ຍົກເວັ້ນແຕ່ໂດຍຫລັກທຳຂອງ [ຄ]ກົດຂອງ
ອານາຈັກຊັ້ນສູງ; ຖ້າບໍ່ດັ່ງນັ້ນເຮົາຈະຮັບ
ນາງໄວ້ກັບຕົວເຮົາເອງບໍ່ໄດ້.
6 ແລະ ຜູ້ຄົນຂອງເຮົາຕ້ອງຖືກ [ກ]ຕີສອນ
ຈົນກວ່າພວກເຂົາໄດ້ຮຽນຮູ້ [ຂ]ການເຊື່ອຟັງ,
ຖ້າຫາກຈຳເປັນ, ໂດຍສິ່ງທີ່ພວກເຂົາທົນ
ທຸກ.
7 ເຮົາບໍ່ໄດ້ກ່າວກ່ຽວກັບຜູ້ຄົນເຫລົ່ານັ້ນ
ທີ່ຖືກກຳນົດໃຫ້ນຳພາຜູ້ຄົນຂອງເຮົາ, ຜູ້
ເປັນແອວເດີກຸ່ມ [ກ]ທຳອິດຂອງສາດສະໜາ
ຈັກຂອງເຮົາ, ເພາະພວກເຂົາທັງໝົດບໍ່ໄດ້
ຢູ່ໃຕ້ການກ່າວໂທດນີ້;
8 ແຕ່ເຮົາກ່າວກ່ຽວກັບໜ່ວຍຕ່າງໆຂອງ
ສາດສະໜາຈັກຂອງເຮົາ—ມີຫລາຍຄົນ
ຈະເວົ້າວ່າ: ພຣະເຈົ້າຂອງພວກເຂົາຢູ່ໃສ?
ຈົ່ງເບິ່ງ, ພຣະອົງຈະປົດປ່ອຍພວກເຂົາໃນ
ເວລາທີ່ມີຄວາມຫຍຸ້ງຍາກ, ຖ້າບໍ່ດັ່ງນັ້ນ
ພວກເຮົາຈະບໍ່ຂຶ້ນໄປຍັງຊີໂອນ, ແລະ ຈະ
ເກັບເງິນຂອງພວກເຮົາໄວ້.
9 ສະນັ້ນ, ເປັນເພາະ [ກ]ການລ່ວງລະເມີດ
ຂອງຜູ້ຄົນຂອງເຮົາ, ເຮົາຈຶ່ງເຫັນສົມຄວນ
ທີ່ພວກແອວເດີຂອງເຮົາຄວນລໍຖ້າຊົ່ວໄລ
ຍະໜຶ່ງສຳລັບການໄຖ່ຊີໂອນ—
10 ເພື່ອວ່າຕົວພວກເຂົາເອງຈະໄດ້ຕຽມ
ພ້ອມ, ແລະ ວ່າຜູ້ຄົນຂອງເຮົາຈະໄດ້ຖືກ
ສິດສອນໃຫ້ສົມບູນຫລາຍຂຶ້ນ, ແລະ ມີປະ
ສົບການ, ແລະ ຮູ້ຈັກ [ກ]ໜ້າທີ່ຂອງພວກເຂົາ
ໃຫ້ສົມບູນຫລາຍຂຶ້ນ, ແລະ ສິ່ງທີ່ເຮົາຮຽກ
ຮ້ອງຈາກມືຂອງພວກເຂົາ.
11 ແລະ ສິ່ງນີ້ຈະເກີດຂຶ້ນບໍ່ໄດ້ຈົນກວ່າ

---

**105** 1 *ກ* ຄພ 100:13.
2 *ກ* ຄພ 104:4–5, 52.
3 *ກ* ກຈກ 5:1–11; ຄພ 42:30. ຄມພ ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.
4 *ກ* ຄພ 78:3–7.
5 *ກ* ຄມພ ຊີໂອນ.
*ຂ* ຄພ 104:15–16.
*ຄ* ຄພ 88:22.
6 *ກ* ຄພ 95:1–2. ຄມພ ຕີສອນ, ການຕີສອນ.
*ຂ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
7 *ກ* ຄພ 20:2–3.
9 *ກ* ຄພ 103:4.
10 *ກ* ຄມພ ໜ້າທີ່.

ᵏພວກ ແອວເດີຂອງເຮົາ ᵏʰໄດ້ຮັບອຳນາດ
ຈາກເບື້ອງບົນເສຍກ່ອນ.
12 ເພາະ ຈົ່ງ ເບິ່ງ, ເຮົາ ໄດ້ ຕຽມ ຂອງ
ປະທານສັກສິດ ແລະ ພອນອັນຍິ່ງໃຫຍ່ທີ່
ຈະ ᵏຖອກເທລົງມາເທິງພວກເຂົາ, ຕາບ
ໃດທີ່ພວກເຂົາຍັງຊື່ສັດ ແລະ ດຳເນີນຕໍ່ໄປ
ໃນຄວາມຖ່ອມຕົວຢູ່ຕໍ່ໜ້າເຮົາ.
13 ສະນັ້ນ ເຮົາເຫັນສົມຄວນທີ່ພວກ
ແອວເດີຂອງເຮົາຄວນລໍຖ້າຊົ່ວໄລຍະໜຶ່ງ,
ສຳລັບການໄຖ່ຊີໂອນ.
14 ເພາະ ຈົ່ງເບິ່ງ, ເຮົາບໍ່ໄດ້ຮຽກຮ້ອງ
ຈາກມືຂອງພວກເຂົາໃຫ້ຕໍ່ສູ້ໃນການສູ້ຮົບ
ຂອງຊີໂອນ; ເພາະ, ດັ່ງທີ່ເຮົາໄດ້ກ່າວໃນ
ບັນຍັດຂໍ້ທີ່ຜ່ານມາສັນໃດ, ເຮົາຈະເຮັດໃຫ້
ມັນສຳເລັດຜົນສັນນັ້ນ—ເຮົາຈະ ᵏສູ້ຮົບໃຫ້
ພວກເຈົ້າ.
15 ຈົ່ງເບິ່ງ, ເຮົາໄດ້ສົ່ງ ᵏຜູ້ທຳລາຍອອກ
ໄປທຳລາຍ ແລະ ເຮັດໃຫ້ສັດຕູຂອງເຮົາ
ເສຍຫາຍ; ແລະ ບໍ່ຫລາຍປີຈາກນັ້ນ ພວກ
ເຂົາຈະບໍ່ເຫລືອຢູ່ ເພື່ອເຮັດ ໃຫ້ມໍລະດົກ
ຂອງເຮົາເປິເປື້ອນ, ແລະ ᵏʰໝິ່ນປະໝາດ
ນາມຂອງເຮົາຢູ່ເທິງແຜ່ນດິນບ່ອນທີ່ເຮົາ
ໄດ້ ᵏʰᵒອຸທິດໄວ້ສຳລັບການເຕົ້າໂຮມຂອງໄພ່
ພົນຂອງເຮົາ.
16 ຈົ່ງເບິ່ງ, ເຮົາໄດ້ບັນຊາຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ ສະມິດ, ຜູ້ລູກ, ໃຫ້ກ່າວກັບ
ᵏກຳລັງຂອງຄົວເຮືອນຂອງເຮົາ, ແມ່ນແຕ່
ນັກຮົບຂອງເຮົາ, ຊາຍໜຸ່ມຂອງເຮົາ, ແລະ
ຄົນໃນໄວກາງອາຍຸ, ໃຫ້ມາເຕົ້າໂຮມກັນ
ເພື່ອການໄຖ່ຜູ້ຄົນຂອງເຮົາ, ແລະ ທຳລາຍ
ຫໍສູງຂອງສັດຕູຂອງເຮົາ, ແລະ ເຮັດໃຫ້
ᵏʰຄົນຍາມຂອງພວກເຂົາແຕກກະຈັດກະ
ຈາຍໄປ.
17 ແຕ່ກຳລັງຂອງຄົວເຮືອນຂອງເຮົາບໍ່
ໄດ້ເຊື່ອຟັງຖ້ອຍຄຳຂອງເຮົາ.
18 ແຕ່ຕາບໃດທີ່ມີຄົນເຊື່ອຟັງຖ້ອຍຄຳ
ຂອງເຮົາ, ເຮົາໄດ້ຕຽມພອນ ແລະ ᵏຂອງ
ປະທານສັກສິດໄວ້ໃຫ້ພວກເຂົາ, ຖ້າຫາກ
ພວກເຂົາຊື່ສັດຕໍ່ໄປ.
19 ເຮົາ ໄດ້ຍິນຄຳອະທິຖານຂອງພວກ
ເຂົາ, ແລະ ຈະຮັບເອົາເຄື່ອງຖວາຍຂອງ
ພວກເຂົາ; ແລະ ເຮົາເຫັນສົມຄວນທີ່ພວກ
ເຂົາຈະຖືກນຳພາມາໄກເຖິງບັດນີ້ເພື່ອ
ການທົດລອງ ᵏສັດທາຂອງພວກເຂົາ.
20 ແລະ ບັດນີ້, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ເຮົາຈະມອບບັນຍັດ
ຂໍ້ໜຶ່ງໃຫ້ແກ່ພວກເຈົ້າ, ວ່າຫລາຍຕໍ່ຫລາຍ
ຄົນທີ່ໄດ້ຂຶ້ນມາບ່ອນນີ້, ທີ່ຈະຢູ່ໄດ້ໃນພາກ
ພື້ນທີ່ອ້ອມຮອບ, ກໍໃຫ້ພວກເຂົາຢູ່.
21 ແລະ ຄົນທີ່ຢູ່ບໍ່ໄດ້, ຜູ້ມີຄອບຄົວຢູ່
ໃນພາກຕາເວັນອອກ, ໃຫ້ພວກເຂົາຢູ່ຕໍ່ໄປ
ຊົ່ວໄລຍະໜຶ່ງ, ຕາບໃດທີ່ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບຈະກຳນົດໃຫ້ພວກເຂົາຢູ່;
22 ເພາະເຮົາຈະແນະນຳລາວກ່ຽວກັບ
ເລື່ອງນີ້, ແລະ ທຸກສິ່ງທັງປວງອັນໃດກໍ
ຕາມທີ່ລາວຈະກຳນົດໃຫ້ພວກເຂົາ ກໍຈະ
ສຳເລັດຄົບຖ້ວນ.
23 ແລະ ໃຫ້ຜູ້ຄົນ ຂອງ ເຮົາ ທຸກ ຄົນ ທີ່
ອາໄສຢູ່ໃນພາກພື້ນຕ່າງໆທີ່ອ້ອມຮອບ
ຊື່ສັດ ໃຫ້ຫລາຍ, ແລະ ອະທິຖານ ໃຫ້
ຫລາຍ, ແລະ ຖ່ອມຕົວຢູ່ຕໍ່ໜ້າເຮົາ, ແລະ
ບໍ່ເປີດເຜີຍສິ່ງທີ່ເຮົາໄດ້ເປີດເຜີຍແກ່ພວກ

11 ກ ຄມພ ແອວເດີ.
ຂ ຄພ 38:32; 95:8.
ຄມພ ຂອງປະທານສັກສິດ.
12 ກ ຄພ 110.
14 ກ ຢຊ 10:12–14;
ອຊຢ 49:25; ຄພ 98:37.
15 ກ ຄພ 1:13–14.
ຂ ຄພ 112:24–26.
ຄມພ ໝິ່ນປະໝາດ,
ການໝິ່ນປະໝາດ.
ຄ ຄພ 84:3–4; 103:35.
16 ກ ຄພ 101:55; 103:22, 30.
ຂ ຄມພ ຍາມ, ຄົນຍາມ.
18 ກ ຄພ 110:8–10.
19 ກ ຄມພ ສັດທາ.

ເຂົາ, ຈົນກວ່າວ່າມັນເປັນຄວາມສະຫລຽວ
ສະຫລາດຂອງ ເຮົາ ທີ່ສິ່ງເຫລົ່ານັ້ນຄວນ
ຖືກເປີດເຜີຍ.
24 ຢ່າ ເວົ້າ ເຖິງ ການ ພິ ພາກ ສາ, ທັງ ບໍ່
ກ່າວ [ກ]ອວດອ້າງ ເລື່ອງ ສັດທາ ຫລື ວຽກ
ງານອັນຍິ່ງໃຫຍ່, ແຕ່ໃຫ້ມາເຕົ້າໂຮມກັນ
ຢ່າງ ລະ ມັດລະວັງ, ໃຫ້ຫລາຍ ເທົ່າ ທີ່ ຈະ
ຫລາຍໄດ້ໃນພາກພື້ນບ່ອນດຽວກັນ, ໂດຍ
ສອດຄ່ອງກັບຄວາມຮູ້ສຶກຂອງຜູ້ຄົນ;
25 ແລະ ຈົ່ງ ເບິ່ງ, ເຮົາຈະມອບຄວາມ
ໂປດປານ ແລະ ພຣະຄຸນໃຫ້ແກ່ພວກເຈົ້າ
ໃນສາຍຕາຂອງພວກເຂົາ, ເພື່ອວ່າພວກ
ເຈົ້າຈະໄດ້ຢູ່ໃນ [ກ]ສັນຕິສຸກ ແລະ ໃນຄວາມ
ປອດໄພ, ໃນຂະນະທີ່ພວກເຈົ້າກ່າວກັບ
ຜູ້ຄົນວ່າ: ຈົ່ງດຳເນີນການພິພາກສາ ແລະ
ຄວາມ ຍຸດ ຕິ ທຳ ແກ່ ພວກ ເຮົາ ຕາມກົດ,
ແລະ ຂໍໃຫ້ມີການຊົດໃຊ້ສຳລັບການເຮັດ
ຜິດຕໍ່ພວກເຮົາ.
26 ບັດ ນີ້, ຈົ່ງ ເບິ່ງ, ເຮົາ ກ່າວ ກັບ ພວກ
ເຈົ້າ, ເພື່ອນຂອງເຮົາ, ໃນວິທີນີ້ ພວກເຈົ້າ
ຈະພົບ ຄວາມ ໂປດປານ ໃນສາຍຕາຂອງ
ຜູ້ ຄົນ, ຈົນ ກວ່າ [ກ]ກອງທັບ ຂອງອິດສະ
ຣາເອນຈະໃຫຍ່ໂຕ.
27 ແລະ ເຮົາ ຈະ ເຮັດ ໃຫ້ ຫົວ ໃຈ ຂອງ ຜູ້
ຄົນອ່ອນລົງ, ດັ່ງທີ່ເຮົາໄດ້ເຮັດກັບຫົວໃຈ
ຂອງ [ກ]ຟາຣາໂອ, ເປັນບາງຄັ້ງ, ຈົນກວ່າ
ຜູ້ຮັບໃຊ້ຂອງເຮົາໂຈເຊັບ ສະມິດ, ຜູ້ລູກ,
ແລະ ພວກແອວເດີຂອງເຮົາ, ຜູ້ຊຶ່ງເຮົາໄດ້
ກຳນົດໄວ້, ຈະມີເວລາເຕົ້າໂຮມກຳລັງຂອງ
ຄົວເຮືອນຂອງເຮົາ,
28 ແລະ ຈະ ສົ່ງ ຜູ້ ຊາຍ ທີ່ [ກ]ສະຫລາດ,
ໄປເຮັດສິ່ງທີ່ເຮົາໄດ້ບັນຊາໃຫ້ສຳເລັດກ່ຽວ
ກັບການ [ຂ]ຊື້ທີ່ດິນທັງໝົດໃນເຂດແຈັກສັນ,
ແລະ ໃນເຂດໃກ້ຄຽງນັ້ນ.
29 ເພາະມັນເປັນຄວາມປະສົງຂອງເຮົາ
ທີ່ຕ້ອງຊື້ທີ່ດິນເຫລົ່ານີ້; ແລະ ຫລັງຈາກໄດ້
ຊື້ມັນແລ້ວ ໄພ່ພົນຂອງເຮົາຈະເປັນເຈົ້າ
ຂອງມັນຕາມ [ກ]ກົດຂອງການອຸທິດຖວາຍ
ຊຶ່ງເຮົາໄດ້ມອບໃຫ້.
30 ແລະ ຫລັງຈາກໄດ້ຊື້ທີ່ດິນເຫລົ່ານີ້
ແລ້ວ, ເຮົາຈະຖືວ່າ [ກ]ກອງທັບຂອງອິດສະ
ຣາເອນບໍ່ມີຄວາມຜິດ ໃນການເຂົ້າໄປ
ເປັນເຈົ້າຂອງທີ່ດິນຂອງພວກເຂົາ, ຊຶ່ງ
ພວກເຂົາໄດ້ຊື້ມາກ່ອນດ້ວຍເງິນຂອງ
ພວກເຂົາ, ແລະ ໃນການທຳລາຍຫໍສູງ
ຂອງສັດຕູຂອງເຮົາທີ່ອາດໂຈມຕີພວກ
ເຂົາຢູ່, ແລະ ເຮັດໃຫ້ຄົນຍາມຂອງພວກ
ເຂົາແຕກກະຈັດກະຈາຍໄປ, ແລະ [ຂ]ແກ້
ແຄ້ນສັດຕູຂອງເຮົາຈົນເຖິງຄົນລຸ້ນທີ
ສາມ ແລະ ທີສີ່ຂອງພວກເຂົາທີ່ກຽດ
ຊັງເຮົາ.
31 ແຕ່ກ່ອນອື່ນ ໃຫ້ກອງທັບຂອງເຮົາ
ໃຫຍ່ໂຕກ່ອນ, ແລະ ໄດ້ຮັບ [ກ]ການຊຳລະ
ໃຫ້ບໍລິສຸດຢູ່ຕໍ່ໜ້າເຮົາ, ເພື່ອວ່າມັນຈະ
ງົດງາມດັ່ງດວງຕາເວັນ, ແລະ ແຈ່ມແຈ້ງ
ດັ່ງ [ຂ]ດວງເດືອນ, ແລະ ວ່າປ້າຍຂອງນາງ
ຈະເປັນໜ້າຢ້ານກົວຕໍ່ທຸກປະຊາຊາດ
ທັງປວງ;
32 ເພື່ອວ່າອານາຈັກຕ່າງໆຂອງໂລກ
ນີ້ຈະຖືກບັງຄັບໃຫ້ຮັບຮູ້ອານາຈັກຂອງ

24 *ກ* ຄພ 84:73.
ຄມພ ຈອງຫອງ,
ຄວາມຈອງຫອງ.
25 *ກ* ຄມພ ສະຫງົບ,
ຄວາມສະຫງົບ.
26 *ກ* ຢອ 2:11.
27 *ກ* ປຖກ 47:1–12.
28 *ກ* ຄພ 101:73.
*ຂ* ຄພ 42:35–36.
29 *ກ* ຄພ 42:30.
ຄມພ ລະບົບເອກະພາບ;
ອຸທິດຖວາຍ, ກົດແຫ່ງ
ການອຸທິດຖວາຍ.
30 *ກ* ຄພ 35:13–14; 101:55;
103:22, 26.
*ຂ* ຄພ 97:22.
31 *ກ* ຄມພ ຊຳລະໃຫ້ບໍລິສຸດ,
ການຊຳລະໃຫ້ບໍລິສຸດ.
*ຂ* ຍພ 6:10;
ຄພ 5:14; 109:73.

ຊີໂອນ ເປັນ [ກ]ອານາຈັກ ຂອງພຣະ ເຈົ້າ ແທ້ໆ ແລະ ພຣະ ຄຣິດຂອງພຣະ ອົງ; ສະນັ້ນ, ໃຫ້ພວກເຮົາ [ຂ]ຂຶ້ນຢູ່ກັບກົດຂອງ ນາງ.

33 ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ກັບ
ພວກເຈົ້າວ່າ ເຮົາເຫັນສົມຄວນທີ່ແອວເດີ ກຸ່ມທຳອິດ ຂອງສາດສະໜາຈັກຂອງເຮົາ ຄວນຮັບເອົາ [ກ]ຂອງປະທານສັກສິດຂອງ ພວກເຂົາຈາກເບື້ອງບົນຢູ່ໃນບ້ານຂອງ ເຮົາ, ຊຶ່ງເຮົາໄດ້ບັນຊາໃຫ້ສ້າງແດ່ນາມ ຂອງເຮົາໃນແຜ່ນດິນເຄີດແລນ.

34 ແລະ ໃຫ້ບັນຍັດເຫລົ່ານັ້ນທີ່ເຮົາໄດ້
ມອບໃຫ້ກ່ຽວກັບຊີໂອນ ແລະ [ກ]ກົດຂອງ ນາງຖືກນຳໄປປະຕິບັດ ແລະ ເກີດສຳເລັດ ຜົນ, ຫລັງຈາກການໄຖ່ຂອງນາງ.

35 ໄດ້ມີວັນແຫ່ງ [ກ]ການເອີ້ນແລ້ວ, ແຕ່
ເວລາໄດ້ມາເຖິງສຳລັບວັນແຫ່ງການ ເລືອກ; ແລະ ໃຫ້ຄົນທີ່ [ຂ]ມີຄ່າຄວນ ໄດ້ຖືກ ເລືອກ.

36 ແລະ ມັນຈະຖືກສະແດງໃຫ້ປະຈັກ
ແກ່ຜູ້ຮັບໃຊ້ຂອງເຮົາ, ໂດຍສຽງຂອງພຣະ ວິນຍານກ່ຽວກັບຜູ້ທີ່ [ກ]ຖືກເລືອກ; ແລະ ພວກເຂົາຈະໄດ້ຮັບ [ຂ]ການຊຳລະໃຫ້ບໍລິ ສຸດ;

37 ແລະ ຕາບໃດທີ່ພວກເຂົາຍັງຕິດຕາມ
[ກ]ຄຳແນະນຳຊຶ່ງພວກເຂົາໄດ້ຮັບ, ພວກ ເຂົາຈະມີພະລັງຫລັງຈາກຫລາຍມື້ທີ່ຈະ ບັນລຸຄວາມສຳເລັດໃນທຸກສິ່ງທັງປວງທີ່ ກ່ຽວພັນກັບຊີໂອນ.

38 ແລະ ອີກເທື່ອໜຶ່ງ ເຮົາກ່າວກັບພວກ
ເຈົ້າວ່າ ຈົ່ງຂໍສັນຕິພາບ, ບໍ່ພຽງແຕ່ກັບຜູ້ ຄົນທີ່ໄດ້ຂົ່ມເຫັງພວກເຈົ້າເທົ່ານັ້ນ, ແລະ ກັບທຸກຜູ້ຄົນນຳອີກ;

39 ແລະ ຈົ່ງ ຍົກ [ກ]ປ້າຍ ສັນ ຍານ ແຫ່ງ
[ຂ]ສັນຕິພາບຂຶ້ນ, ແລະ ປະກາດຄວາມເປັນ ສັນຕິພາບຈົນເຖິງທີ່ສຸດຂອງແຜ່ນດິນໂລກ;

40 ແລະ ໃຫ້ຂໍສັນຕິພາບຈາກຄົນທີ່ໄດ້
ຂົ່ມເຫັງພວກເຈົ້າ, ຕາມສຽງຂອງພຣະວິນ ຍານທີ່ຢູ່ໃນພວກເຈົ້າ, ແລະ [ກ]ທຸກສິ່ງທັງ ປວງຈະທຳງານນຳກັນເພື່ອຄວາມດີຂອງ ພວກເຈົ້າ.

41 ສະນັ້ນ, ຈົ່ງຊື່ສັດ; ແລະ ຈົ່ງເບິ່ງ, ແລະ
ເບິ່ງແມ, [ກ]ເຮົາຈະຢູ່ກັບພວກເຈົ້າແມ່ນແຕ່ ຈົນເຖິງທີ່ສຸດ. ແມ່ນເປັນດັ່ງນັ້ນ. ອາແມນ.

---

# ພາກທີ 106

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດ ໂອໄຮໂອ, ວັນທີ 25 ເດືອນພະຈິກ, 1834. ການເປີດເຜີຍນີ້ແມ່ນເຈາະຈົງໃສ່ວໍເຣັນ ເອ ຄາວເດີຣີ, ອ້າຍຂອງອໍລິເວີ ຄາວເດີຣີ.*

---

32 *ກ* ພນມ 11:15.
ຄມພ ອານາຈັກຂອງ ພຣະເຈົ້າ ຫລື ອາ ນາຈັກສະຫວັນ.
*ຂ* ຄມພ ປົກຄອງ, ການປົກຄອງ.
33 *ກ* ຄພ 95:8–9.
ຄມພ ຂອງປະທານສັກສິດ.
34 *ກ* ອສ ຄພ 42 ຮູ້ຈັກ ກັນວ່າ "ກົດ."
35 *ກ* ຄມພ ເອີ້ນ, ການ ເອີ້ນ, ຖືກເອີ້ນຈາກ ພຣະເຈົ້າ, ຕຳແໜ່ງ.
*ຂ* ຄມພ ຄ່າຄວນ, ການ ມີຄ່າຄວນ.
36 *ກ* ຄພ 95:5.
ຄມພ ເລືອກ, ໄດ້ ເລືອກ, ຖືກເລືອກ.
*ຂ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
37 *ກ* ຄມພ ຄຳແນະນຳ.
39 *ກ* ຄມພ ປ້າຍສັນຍານ.
*ຂ* ຄມພ ສະຫງົບ, ຄວາມສະຫງົບ.
40 *ກ* ຣມ 8:28;
ຄພ 90:24; 100:15.
41 *ກ* ມທ 28:19–20.

*1–3, ວໍເຣັນ ເອ ຄາວເດີຣີ ໄດ້ຖືກເອີ້ນໃຫ້
ເປັນ ເຈົ້າໜ້າທີ່ຄວບຄຸມ ໃນທ້ອງ ຖິ່ນຄືນ
ໜຶ່ງ; 4–5, ການສະເດັດມາຄັ້ງທີສອງຈະ
ບໍ່ເກີດກັບລູກຫລານແຫ່ງຄວາມສະຫວ່າງ
ຄືກັນກັບຂະໂມຍ; 6–8, ພອນອັນຍິ່ງໃຫຍ່
ເກີດຂຶ້ນເນື່ອງດ້ວຍການຮັບໃຊ້ຢ່າງຊື່ສັດຢູ່
ໃນສາດສະໜາຈັກ.*

1 ມັນເປັນຄວາມປະສົງຂອງເຮົາທີ່ຜູ້ຮັບ
ໃຊ້ຂອງເຮົາ ວໍເຣັນ ເອ ຄາວເດີຣີ ຄວນໄດ້
ຮັບການກຳນົດ ແລະ ການແຕ່ງຕັ້ງໃຫ້ເປັນ
ມະຫາປະໂລຫິດຄວບຄຸມສາດສະໜາຈັກ
ຂອງເຮົາ, ໃນແຜ່ນດິນ [ກ]ອິດສະລະພາບ
ແລະ ໃນພາກພື້ນຕ່າງໆທີ່ອ້ອມຮອບ;

2 ແລະ ຄວນສັ່ງສອນພຣະກິດຕິຄຸນອັນ
ເປັນນິດຂອງເຮົາ, ແລະ ເປັ່ງສຽງຂອງລາວ
ແລະ ເຕືອນຜູ້ຄົນ, ບໍ່ພຽງແຕ່ໃນສະຖານທີ່
ຂອງລາວເອງເທົ່ານັ້ນ, ແຕ່ໃນເຂດໃກ້ຄຽງ
ນຳອີກ;

3 ແລະ ອຸທິດເວລາທັງໝົດຂອງລາວໃຫ້
ແກ່ການເອີ້ນທີ່ສູງສົ່ງ ແລະ ສັກສິດນີ້, ຊຶ່ງ
ບັດນີ້ເຮົາໄດ້ມອບໃຫ້ແກ່ລາວ, ໂດຍ [ກ]ການ
ສະແຫວງຫາ [ຂ]ອານາຈັກສະຫວັນ ແລະ
ຄວາມຊອບທຳຂອງມັນຢ່າງພາກພຽນ,
ແລະ ທຸກສິ່ງທັງປວງທີ່ຈຳເປັນຈະຖືກຕື່ມ
ໃສ່; ເພາະ [ຄ]ຄົນງານກໍເໝາະສົມກັບຄ່າ
ຈ້າງຂອງເຂົາ.

4 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ [ກ]ການສະ
ເດັດມາຂອງພຣະຜູ້ເປັນເຈົ້າ ໃກ້ [ຂ]ຈະມາ
ເຖິງແລ້ວ, ແລະ ມັນຈະເກີດກັບໂລກຄືກັນ
ກັບ [ຄ]ຂະໂມຍໃນຍາມກາງຄືນ—

5 ສະນັ້ນ, ຈົ່ງຄາດແອວພວກເຈົ້າ, ເພື່ອ
ວ່າພວກເຈົ້າຈະໄດ້ເປັນລູກຫລານແຫ່ງ
[ກ]ຄວາມສະຫວ່າງ, ແລະ ວ່າວັນນີ້ຈະບໍ່
[ຂ]ເກີດກັບພວກເຈົ້າຄືກັນກັບຂະໂມຍ.

6 ແລະ ອີກເທື່ອ ໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ສະຫວັນ
ຊື່ນຊົມເມື່ອຜູ້ຮັບໃຊ້ຂອງເຮົາ ວໍເຣັນ ກົ້ມ
ລົງຢູ່ຕໍ່ໜ້າໄມ້ຄ້ອນເທົ້າແຫ່ງອຳນາດຂອງ
ເຮົາ, ແລະ ໄດ້ແຍກຕົວລາວເອງອອກຈາກ
ເລ່ຫລ່ຽມຂອງມະນຸດແລ້ວ;

7 ສະນັ້ນ, ຜູ້ຮັບໃຊ້ຂອງເຮົາ ວໍເຣັນ ເປັນ
ສຸກແລ້ວ, ເພາະວ່າເຮົາຈະມີຄວາມເມດຕາ
ຕໍ່ລາວ; ແລະ, ທັງໆທີ່ໃຈຂອງລາວ [ກ]ໂອ້
ອວດ, ແຕ່ເຮົາຈະຍົກລາວຂຶ້ນ ຕາບໃດທີ່
ລາວຈະຖ່ອມຕົວຢູ່ຕໍ່ໜ້າເຮົາ.

8 ແລະ ເຮົາຈະມອບ [ກ]ພຣະຄຸນ ແລະ
ຄວາມແນ່ນອນໃຈໃຫ້ແກ່ລາວ ຊຶ່ງດ້ວຍສິ່ງ
ເຫລົ່ານັ້ນລາວຈະຍຶດໝັ້ນຢູ່ໄດ້; ແລະ ຖ້າ
ຫາກລາວເປັນພະຍານທີ່ຊື່ສັດ ແລະ ເປັນ
ຄວາມສະຫວ່າງໃຫ້ແກ່ສາດສະໜາຈັກ
ຕໍ່ໄປ ເຮົາໄດ້ຕຽມມົງກຸດໄວ້ໃຫ້ລາວແລ້ວ
ຢູ່ໃນ [ຂ]ຜາສາດຂອງພຣະບິດາຂອງເຮົາ.
ແມ່ນເປັນດັ່ງນັ້ນ. ອາແມນ.

**106** 1 *ກ* ອສ ເມືອງອິດສະລະພາບ, ນິວຢອກ, ແລະ ບໍລິເວນອ້ອມແອ້ມ.
3 *ກ* ມທ 6:33.
*ຂ* ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
*ຄ* ມທ 10:10; ຄພ 31:5.
4 *ກ* ຢກບ 5:8.
*ຂ* ຄມພ ຍຸກສຸດທ້າຍ.
*ຄ* 1 ທສນ 5:2.
5 *ກ* ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
*ຂ* ພນມ 16:15.
7 *ກ* ຄມພ ອວດອົ່ງ, ຄວາມອວດອົ່ງ.
8 *ກ* ຄມພ ພຣະຄຸນ.
*ຂ* ຢຮ 14:2; ອທ 12:32–34; ຄພ 59:2; 76:111; 81:6; 98:18.

# ພາກທີ 107

*ການເປີດເຜີຍເລື່ອງຖານະປະໂລຫິດ, ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ປະມານ ເດືອນເມສາ 1835. ເຖິງແມ່ນພາກນີ້ໄດ້ຖືກບັນທຶກໄວ້ໃນປີ 1835, ບັນທຶກປະຫວັດສາດຢືນຢັນວ່າ ຂໍ້ຄວາມສ່ວນຫລາຍຂອງ ຂໍ້ທີ 60 ຈົນເຖິງ 100 ເອົາຮວມເຂົ້າກັນກັບການເປີດເຜີຍທີ່ໄດ້ມອບໃຫ້ຜ່ານທາງໂຈເຊັບ ສະມິດ ໃນວັນທີ 11 ເດືອນພະຈິກ, 1831. ພາກນີ້ແມ່ນກ່ຽວພັນກັບການຈັດຕັ້ງກຸ່ມອັກຄະສາວົກສິບສອງ ໃນເດືອນກຸມພາ ແລະ ເດືອນມີນາ 1835. ອາດເປັນວ່າ ສາດສະດາໄດ້ນຳມັນຂຶ້ນສະເໜີແກ່ຜູ້ທີ່ຕຽມເດີນທາງ ໃນວັນທີ 3 ເດືອນພຶດສະພາ, 1835, ເພື່ອໄປເຜີຍແຜ່ເປັນເທື່ອທຳອິດຂອງກຸ່ມ.*

*1–6, ມີຖານະປະໂລຫິດສອງຢ່າງ: ເມນຄີເສເດັກ ແລະ ອາໂຣນ; 7–12, ຜູ້ດຳລົງໃນຖານະປະໂລຫິດແຫ່ງເມນຄີເສເດັກມີອຳນາດທີ່ຈະປະຕິບັດໜ້າທີ່ທຸກຕຳແໜ່ງໃນສາດສະໜາຈັກ; 13–17, ຝ່າຍອະທິການເປັນຜູ້ຄວບຄຸມຖານະປະໂລຫິດແຫ່ງອາໂຣນ, ຊຶ່ງປະຕິບັດພິທີການພາຍນອກ; 18–20, ຖານະປະໂລຫິດແຫ່ງເມນຄີເສເດັກມີຂໍກະແຈຂອງພອນທາງວິນຍານທຸກປະການ; ຖານະປະໂລຫິດແຫ່ງອາໂຣນມີຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ; 21–38, ຝ່າຍປະທານສູງສຸດ, ອັກຄະສາວົກສິບສອງ, ແລະ ສາວົກເຈັດສິບປະກອບເປັນກຸ່ມຄວບຄຸມ, ຊຶ່ງການຕັດສິນຂອງພວກເພິ່ນຕ້ອງເປັນອັນໜຶ່ງດຽວກັນ ແລະ ໃນຄວາມຊອບທຳ; 39–52, ລະບຽບແຫ່ງປິຕຸໄດ້ຖືກຈັດຕັ້ງຂຶ້ນຈາກອາດາມ ເຖິງ ໂນອາ; 53–57, ໄພ່ພົນຂອງພຣະເຈົ້າໃນສະໄໝບູຮານໄດ້ມາເຕົ້າໂຮມກັນຢູ່ທີ່ອາດາມ-ອອນໄດ-ອາມັນ, ແລະ ພຣະຜູ້ເປັນເຈົ້າໄດ້ປະກົດຕົວຕໍ່ພວກເຂົາ; 58–67, ອັກຄະສາວົກສິບສອງຕ້ອງວາງລະບຽບເຈົ້າໜ້າທີ່ຂອງສາດສະໜາຈັກ; 68–76, ອະທິການຮັບໃຊ້ເປັນຜູ້ຕັດສິນທົ່ວໄປໃນອິດສະຣາເອນ; 77–84, ຝ່າຍປະທານສູງສຸດ ແລະ ອັກຄະສາວົກສິບສອງປະກອບເປັນສານສູງສຸດໃນສາດສະໜາຈັກ; 85–100, ປະທານຂອງຖານະປະໂລຫິດປົກຄອງກຸ່ມຂອງຕົນເອງ.*

1 ໃນສາດສະໜາຈັກ, ມີຖານະປະໂລ
ຫິດຢູ່ດ້ວຍກັນສອງຢ່າງ, ນັ້ນຄື, [ກ]ເມນຄີເສ
ເດັກ ແລະ [ຂ]ອາໂຣນ, ລວມທັງ ຖານະປະ
ໂລຫິດແຫ່ງເລວີ.
2 ເຫດຜົນຢ່າງທຳອິດຖືກເອີ້ນວ່າຖານະ
ປະໂລຫິດແຫ່ງ [ກ]ເມນຄີເສເດັກ ກໍເພາະວ່າ
ເມນຄີເສເດັກໄດ້ເປັນ ມະຫາປະໂລຫິດທີ່
ຍິ່ງໃຫຍ່ຫລາຍ.
3 ກ່ອນ ວັນ ເວລາ ຂອງ ເພິ່ນ ມັນ ຖືກ
ເອີ້ນວ່າ ຖານະປະໂລຫິດສັກສິດ, ຕາມ
[ກ]*ລະບຽບຂອງພຣະບຸດຂອງພຣະເຈົ້າ.*
4 ແຕ່ເນື່ອງຈາກຄວາມນັບຖືຫລື [ກ]ຄວາມ
ຄາລະວະຕໍ່ພຣະນາມຂອງພຣະຜູ້ສູງ

**107** 1 *ກ* ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
*ຂ* ຄມພ ຖານະປະໂລຫິດແຫ່ງອາໂຣນ.
2 *ກ* ປຈສ ປຖກ 14:25–40 (ພາກທ້ອຍທ້າຍ); ຄພ 84:14. ຄມພ ເມນຄີເສເດັກ.
3 *ກ* ແອວ 13:3–19; ຄພ 76:57.
4 *ກ* ຄມພ ຄາລະວະ, ຄວາມຄາລະວະ.

ສຸດ, ເພື່ອ ຫລີກ ເວັ້ນ ຈາກ ການ ກ່າວ ເຖິງ
ພຣະ ນາມ ຂອງ ພຣະ ອົງ ເລື້ອຍໆ, ຜູ້ຄົນ,
ສາດສະໜາຈັກ, ໃນສະໄໝບູຮານ, ຈຶ່ງໄດ້
ເອີ້ນຖານະປະໂລຫິດນັ້ນຕາມເມນຄີເສ
ເດັກ, ຫລື ຖານະປະໂລຫິດແຫ່ງເມນຄີເສ
ເດັກ.
5 ເຈົ້າໜ້າທີ່ ຫລື ຕຳແໜ່ງອື່ນໆທັງປວງ
ໃນສາດສະໜາຈັກເປັນ [ກ]ສ່ວນປະກອບ
ຂອງຖານະປະໂລຫິດນີ້.
6 ແຕ່ມີສອງຝ່າຍ ຫລື ສອງໝວດໃຫຍ່—
ຢ່າງໜຶ່ງແມ່ນຖານະປະໂລຫິດແຫ່ງເມນຄີ
ເສເດັກ, ແລະ ອີກຢ່າງໜຶ່ງແມ່ນ [ກ]ຖານະ
ປະໂລຫິດແຫ່ງອາໂຣນ ຫລື ເລວີ.
7 ຕຳແໜ່ງຂອງ [ກ]ແອວເດີ ແມ່ນ ຢູ່ ໃນ
ຖານະປະໂລຫິດແຫ່ງເມນຄີເສເດັກ.
8 ຖານະປະໂລຫິດແຫ່ງເມນຄີເສເດັກ
ຖືສິດຂອງຝ່າຍປະທານ, ແລະ ມີອຳນາດ
ແລະ [ກ]ສິດອຳນາດເໜືອຕຳແໜ່ງທັງໝົດ
ໃນສາດສະໜາຈັກໃນທຸກຍຸກທຸກສະໄໝ
ຂອງໂລກ, ເພື່ອປະຕິບັດໃນເລື່ອງທາງວິນ
ຍານ.
9 [ກ]ຝ່າຍປະທານຂອງຖານະປະໂລຫິດ
ສູງ, ຕາມລະບຽບຂອງເມນຄີເສເດັກ, ມີສິດ
ທີ່ຈະປະຕິບັດໃນທຸກຕຳແໜ່ງໃນສາດສະ
ໜາຈັກ.
10 [ກ]ມະຫາປະໂລຫິດຕາມລະບຽບຂອງ
ຖານະປະໂລຫິດແຫ່ງເມນຄີເສເດັກ [ຂ]ມີສິດ
ທີ່ຈະປະຕິບັດໜ້າທີ່ໃນຕຳແໜ່ງຂອງຕົນ
ເອງ, ພາຍໃຕ້ການຊີ້ນຳຂອງຝ່າຍປະທານ,
ໃນການປະຕິບັດເລື່ອງທາງວິນຍານ, ແລະ
ໃນຕຳແໜ່ງຂອງແອວເດີ, ປະໂລຫິດ (ຂອງ
ລະບຽບຊາວເລວີ), ຄູສອນ, ມັກຄະນາຍົກ,
ແລະ ສະມາຊິກນຳອີກ.
11 ແອວເດີມີສິດທີ່ຈະປະຕິບັດແທນ
ເມື່ອມະຫາປະໂລຫິດບໍ່ຢູ່.
12 ມະຫາປະໂລຫິດ ແລະ ແອວເດີຕ້ອງ
ປະຕິບັດໃນເລື່ອງທາງວິນຍານ, ໃຫ້ສອດ
ຄ່ອງກັບພັນທະສັນຍາ ແລະ ພຣະບັນຍັດ
ຂອງສາດສະໜາຈັກ; ແລະ ພວກເຂົາມີສິດ
ທີ່ຈະປະຕິບັດໜ້າທີ່ໃນຕຳແໜ່ງທັງໝົດ
ເຫລົ່ານີ້ຂອງສາດສະໜາຈັກ ເມື່ອບໍ່ມີເຈົ້າ
ໜ້າທີ່ລະດັບສູງກວ່າຢູ່ທີ່ນັ້ນ.
13 ຖານະປະໂລຫິດທີສອງຖືກເອີ້ນວ່າ
[ກ]ຖານະປະໂລຫິດແຫ່ງອາໂຣນ, ເພາະມັນ
ໄດ້ຖືກມອບໃຫ້ແກ່ [ຂ]ອາໂຣນ ແລະ ເຊື້ອ
ສາຍຂອງລາວ, ຕະຫລອດທຸກລຸ້ນຂອງ
ພວກເຂົາ.
14 ເຫດຜົນທີ່ມັນຖືກເອີ້ນວ່າ ຖານະປະ
ໂລຫິດທີ່ຕ່ຳກວ່າ ເພາະມັນເປັນ [ກ]ສ່ວນ
ປະກອບຂອງຖານະປະໂລຫິດທີ່ສູງກວ່າ,
ຫລື ຖານະປະໂລຫິດແຫ່ງເມນຄີເສເດັກ,
ແລະ ມີອຳນາດໃນການປະຕິບັດພິທີການ
ພາຍນອກ.
15 [ກ]ຝ່າຍອະທິການເປັນຝ່າຍປະທານ
ຂອງຖານະປະໂລຫິດນີ້, ແລະ ຖືຂໍກະແຈ
ຫລື ສິດອຳນາດຂອງຖານະປະໂລຫິດດັ່ງ
ກ່າວ.
16 ບໍ່ມີມະນຸດຄົນໃດມີສິດຖືກຕ້ອງໃນ
ຕຳແໜ່ງນີ້, ທີ່ຈະຖືຂໍກະແຈຂອງຖານະປະ
ໂລຫິດນີ້, ຍົກເວັ້ນແຕ່ພວກເຂົາມາຈາກ
[ກ]ຕະກຸນໂດຍແທ້ຂອງອາໂຣນເທົ່ານັ້ນ.
17 ແຕ່ເນື່ອງຈາກວ່າມະຫາປະໂລຫິດ

5 ກ ຄພ 84:29; 107:14.
6 ກ ພບຍ 10:8–9.
7 ກ ຄມພ ແອວເດີ.
8 ກ ຄມພ ສິດອຳນາດ.
9 ກ ຄພ 81:2; 107:22, 65–67, 91–92.
10 ກ ຄມພ ມະຫາປະໂລຫິດ.
ຂ ຄພ 121:34–37.
13 ກ ຄມພ ຖານະປະໂລຫິດແຫ່ງອາໂຣນ.
ຂ ຄມພ ອາໂຣນ, ອ້າຍຂອງໂມເຊ.
14 ກ ຄພ 20:52; 107:5.
15 ກ ຄມພ ອະທິການ.
16 ກ ຄພ 68:14–21; 107:68–76.

ຂອງຖານະປະໂລຫິດແຫ່ງເມນຄີເສເດັກ
ມີສິດອຳນາດທີ່ຈະປະຕິບັດໜ້າທີ່ໃນຕຳ
ແໜ່ງທັງໝົດທີ່ຕ່ຳກວ່າ, ເຂົາຈະປະຕິບັດ
ໜ້າທີ່ໃນຕຳແໜ່ງຂອງອະທິການ ເມື່ອຫາ
ຕະກຸນໂດຍແທ້ຂອງອາໂຣນບໍ່ໄດ້, ໂດຍ
ໃຫ້ລາວໄດ້ຖືກເອີ້ນ ແລະ ຖືກແຕ່ງຕັ້ງເປັນ
ທາງການ ແລະ ຖືກ [ກ]ແຕ່ງຕັ້ງສູ່ອຳນາດນີ້
ໂດຍການວາງມື ຂອງ [ຂ]ຝ່າຍປະທານຂອງ
ຖານະປະໂລຫິດແຫ່ງເມນຄີເສເດັກ.

18 ອຳນາດ ແລະ ສິດອຳນາດຂອງ
ຖານະປະໂລຫິດທີ່ສູງກວ່າ, ຫລື ຖານະ
ປະໂລຫິດແຫ່ງເມນຄີເສເດັກ, ຄືການຖື [ກ]ຂໍ
ກະແຈຂອງພອນທາງວິນຍານທັງໝົດຂອງ
ສາດສະໜາຈັກ—

19 ການມີສິດທິພິເສດທີ່ຈະຮັບເອົາ
[ກ]ຄວາມລຶກລັບຂອງອານາຈັກສະຫວັນ,
ໃຫ້ຟ້າສະຫວັນເປີດແກ່ພວກເຂົາ, ເພື່ອ
ຕິດຕໍ່ກັບການຊຸມນຸມ [ຂ]ໃຫຍ່ ແລະ ສາດ
ສະໜາຈັກຂອງພຣະບຸດຫົວປີ, ແລະ ຊື່ນ
ຊົມກັບການພົວພັນ ແລະ ການປະທັບຢູ່
ຂອງພຣະເຈົ້າອົງເປັນພຣະບິດາ, ແລະ
ພຣະເຢຊູຜູ້ [ຄ]ເປັນກາງຂອງພັນທະສັນ
ຍາໃໝ່.

20 ອຳນາດ ແລະ ສິດ ອຳນາດ ຂອງ
ຖານະປະໂລຫິດທີ່ຕ່ຳກວ່າ, ຫລື ຖານະ
ປະໂລຫິດແຫ່ງອາໂຣນ, ຄືການຖື [ກ]ຂໍ
ກະແຈແຫ່ງການປະຕິບັດຂອງເຫລົ່າທູດ,
ແລະ ການປະຕິບັດ [ຂ]ພິທີການພາຍນອກ,
ຕົວອັກສອນຂອງພຣະກິດຕິຄຸນ, [ຄ]ການ
ບັບຕິສະມາແຫ່ງການກັບໃຈເພື່ອ [ງ]ການ
ປົດບາບ, ໃຫ້ສອດຄ່ອງກັບພັນທະສັນຍາ
ແລະ ພຣະບັນຍັດ.

21 ດ້ວຍຄວາມຈຳເປັນຈຶ່ງມີປະທານ,
ຫລື ເຈົ້າໜ້າທີ່ຄວບຄຸມຈຶ່ງເກີດຂຶ້ນຈາກ,
ຫລື ຖືກກຳນົດຈາກ ຫລື ມາຈາກຄົນເຫລົ່າ
ນັ້ນທີ່ຖືກແຕ່ງຕັ້ງ ສູ່ຕຳແໜ່ງຕ່າງໆໃນ
ຖານະປະໂລຫິດສອງຢ່າງນີ້.

22 ຈາກ [ກ]ຖານະປະໂລຫິດແຫ່ງເມນຄີ
ເສເດັກ, ມະຫາປະໂລຫິດ [ຂ]ຄວບຄຸມສາມ
ຄົນ, ຊຶ່ງໄດ້ຖືກເອີ້ນໂດຍສະພາ, ໄດ້ຖືກກຳ
ນົດ ແລະ ຖືກແຕ່ງຕັ້ງສູ່ຕຳແໜ່ງນີ້, ແລະ
ໄດ້ຮັບ [ຄ]ການສະໜັບສະໜູນໂດຍຄວາມ
ໝັ້ນໃຈ, ສັດທາ, ແລະ ຄຳອະທິຖານຂອງ
ສາດສະໜາຈັກ, ປະກອບເປັນກຸ່ມຂອງ
ຝ່າຍປະທານຂອງສາດສະໜາຈັກ.

23 ສະມາຊິກ [ກ]ສິບສອງຄົນໃນສະພາ
ທີ່ເຄື່ອນທີ່ຖືກເອີ້ນວ່າ [ຂ]ອັກຄະສາວົກສິບ
ສອງ—ພະຍານພິເສດ ເຖິງພຣະນາມຂອງ
ພຣະຄຣິດໃນທົ່ວໂລກ, ດັ່ງນັ້ນ ຈຶ່ງແຕກ
ຕ່າງຈາກໜ້າທີ່ອື່ນໆໃນສາດສະໜາຈັກ
ໃນໜ້າທີ່ການເອີ້ນຂອງພວກເພິ່ນ.

24 ແລະ ພວກເພິ່ນປະກອບເປັນກຸ່ມ, ມີ
ສິດອຳນາດ ແລະ ອຳນາດເທົ່າທຽມກັບ
ປະທານສາມຄົນທີ່ໄດ້ກ່າວເຖິງຜ່ານມາ.

25 ສາວົກ [ກ]ເຈັດສິບຖືກເອີ້ນໃຫ້ສັ່ງສອນ
ພຣະກິດຕິຄຸນ, ແລະ ເປັນພະຍານພິເສດ
ຕໍ່ຄົນຕ່າງຊາດ ແລະ ໃນທົ່ວໂລກ—ດັ່ງ
ນັ້ນຈຶ່ງແຕກຕ່າງຈາກໜ້າທີ່ອື່ນໆ ໃນສາດ

17 *ກ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
*ຂ* ຄພ 68:15.
18 *ກ* ຄມພ ຂໍກະແຈຂອງ ຖານະປະໂລຫິດ.
19 *ກ* ແອວ 12:9–11; ຄພ 63:23; 84:19–22. ຄມພ ຄວາມລຶກລັບ ຂອງພຣະເຈົ້າ.
*ຂ* ຮຣ 12:22–24.
*ຄ* ຄມພ ພຣະຜູ້ເປັນກາງ.
20 *ກ* ຄພ 13; 84:26–27.
*ຂ* ຄມພ ພິທີການ.
*ຄ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ງ* ຄມພ ປົດບາບ, ການປົດບາບ.
22 *ກ* ຄມພ ຖານະປະໂລຫິດ ແຫ່ງເມນຄີເສເດັກ.
*ຂ* ຄພ 90:3, 6; 107:9, 65–67, 78–84, 91–92.
*ຄ* ຄມພ ການສະໜັບສະໜູນ ຜູ້ນຳຂອງສາດສະໜາຈັກ.
23 *ກ* ຄພ 107:33–35.
*ຂ* ຄມພ ອັກຄະສາວົກ.
25 *ກ* ຄມພ ສາວົກເຈັດສິບ.

ສະໜາ ຈັກ ໃນ ໜ້າທີ່ຂອງການ ເອີ້ນຂອງ
ເຂົາ.ເຈົ້າ.

26 ແລະ ເຂົາ ເຈົ້າ ປະກອບ ເປັນ ກຸ່ມ, ມີ
ສິດ ອຳນາດ ເທົ່າທຽມກັບ ພະຍານພິເສດ
ສິບສອງຄົນ ຫລື ອັກຄະສາວົກສິບສອງທີ່
ຫາກໍກ່າວເຖິງ.

27 ແລະ ການຕັດສິນທຸກເລື່ອງ ທີ່ເຮັດ
ໂດຍກຸ່ມເຫລົ່ານີ້ ຈະຕ້ອງເປັນເອກະສັນ;
ນັ້ນ ຄື, ສະມາຊິກທຸກ ຄົນ ໃນ ແຕ່ລະ ກຸ່ມ
ຈະຕ້ອງເຫັນພ້ອມກັນໃນການຕັດສິນໃນ
ສະພາ, ເພື່ອເຮັດໃຫ້ການຕັດສິນຂອງເຂົາ
ເຈົ້າ ມີອຳນາດດຽວກັນ ຫລື ມີສິດອຳນາດ
ນຳກັນໃນສະພາ—

28 ສຽງສ່ວນຫລາຍສາມາດປະກອບກຸ່ມ
ຂຶ້ນ ເມື່ອສະພາບການເຮັດໃຫ້ເປັນຢ່າງອື່ນ
ບໍ່ໄດ້—

29 ຍົກເວັ້ນແຕ່ໃນກໍລະນີນີ້, ການຕັດ
ສິນຂອງເຂົາເຈົ້າບໍ່ມີສິດໃນພອນອັນດຽວ
ກັນ ກັບການຕັດສິນຂອງກຸ່ມຂອງປະທານ
ສາມຄົນ ຊຶ່ງມີໃນສະໄໝບູຮານ, ຜູ້ໄດ້
ຖືກແຕ່ງຕັ້ງຕາມລະບຽບຂອງເມນຄີເສ
ເດັກ, ແລະ ເປັນຜູ້ຊາຍທີ່ຊອບທຳ ແລະ
ບໍລິສຸດ.

30 ການ ຕັດ ສິນ ຂອງ ກຸ່ມ ເຫລົ່າ ນີ້, ຫລື
ກຸ່ມ ໃດ ກຸ່ມໜຶ່ງ, ແມ່ນຕ້ອງເຮັດ ໄປດ້ວຍ
[ກ]ຄວາມ ຊອບ ທຳ, ດ້ວຍ ຄວາມ ບໍລິສຸດ,
ແລະ ຄວາມຕ່ຳຕ້ອຍໃນໃຈ, ດ້ວຍຄວາມ
ອ່ອນໂຍນ ແລະ ຄວາມອົດກັ້ນ, ແລະ ດ້ວຍ
ສັດທາ, ແລະ [ຂ]ຄຸນນະທຳ, ແລະ ຄວາມຮູ້,
ຄວາມຢັບຢັ້ງຕົນ, ຄວາມອົດທົນ, ຄວາມ
ເປັນເໝືອນພຣະເຈົ້າ, ຄວາມກະລຸນາສັນ
ອ້າຍນ້ອງ ແລະ ຄວາມໃຈບຸນ;

31 ເພາະຄຳສັນຍາຄື ຖ້າຫາກສິ່ງເຫລົ່າ
ນີ້ມີຢ່າງຫລວງຫລາຍໃນເຂົາເຈົ້າ, ແລ້ວ
ເຂົາເຈົ້າຈະ [ກ]ບໍ່ໄຮ້ຜົນໃນ ຄວາມຮູ້ເລື່ອງ
ພຣະຜູ້ເປັນເຈົ້າ.

32 ແລະ ໃນກໍລະນີທີ່ການຕັດສິນຂອງ
ກຸ່ມເຫລົ່ານີ້ ກະທຳໄປໃນຄວາມບໍ່ຊອບ
ທຳ, ກໍສາມາດນຳມາຢູ່ຕໍ່ໜ້າການຊຸມນຸມ
ໃຫຍ່ຂອງກຸ່ມຕ່າງໆ, ຊຶ່ງປະກອບດ້ວຍເຈົ້າ
ໜ້າທີ່ຝ່າຍວິນຍານຂອງສາດສະໜາຈັກ;
ຖ້າບໍ່ດັ່ງນັ້ນ ຈະມີການອຸທອນບໍ່ໄດ້ຈາກ
ການຕັດສິນ ຂອງສະພາເຫລົ່ານັ້ນ.

33 ອັກຄະສາວົກສິບສອງເປັນສະພາສູງ
ເຄື່ອນທີ່ຄວບຄຸມ, ເພື່ອປະຕິບັດໜ້າທີ່ໃນ
ພຣະນາມຂອງພຣະຜູ້ເປັນເຈົ້າ, ພາຍໃຕ້
ການຊີ້ນຳຂອງຝ່າຍປະທານຂອງສາດສະ
ໜາຈັກ, ໂດຍສອດຄ່ອງກັບສະຖາບັນແຫ່ງ
ສະຫວັນ; ເພື່ອເສີມສ້າງສາດສະໜາຈັກ,
ແລະ ຄວບຄຸມທຸລະກິດທັງໝົດຂອງສາດ
ສະໜາຈັກໃນປະຊາຊາດທັງປວງ, ທຳອິດ
ໃຫ້ແກ່ [ກ]ຄົນຕ່າງຊາດ ແລະ ຕໍ່ໄປໃຫ້ແກ່
ຊາວຢິວ.

34 ສາວົກເຈັດສິບຕ້ອງກະທຳໃນພຣະ
ນາມຂອງພຣະຜູ້ເປັນເຈົ້າ, ພາຍໃຕ້ການ
ຊີ້ ນຳ ຂອງອັກຄະ ສາວົກ [ກ]ສິບ ສອງ ຫລື
ສະພາສູງເຄື່ອນທີ່, ໃນການເສີມສ້າງສາດ
ສະໜາຈັກ ແລະ ຄວບຄຸມທຸລະກິດທັງໝົດ
ຂອງສາດສະໜາຈັກ ໃນປະຊາຊາດທັງ
ປວງ, ທຳອິດໃຫ້ແກ່ຄົນຕ່າງຊາດ ແລະ ຕໍ່
ໄປໃຫ້ແກ່ຊາວຢິວ—

35 ອັກຄະສາວົກສິບສອງໂດຍທີ່ຖືກສົ່ງ
ອອກໄປ, ຖືຂໍກະແຈ, ເພື່ອເປີດປະຕູໂດຍ
ການປະກາດພຣະກິດຕິຄຸນຂອງພຣະເຢຊູ

30 *ກ* ຄພ 121:36.
ຄມພ ຊອບທຳ,
ຄວາມຊອບທຳ.
*ຂ* ຄພ 121:41.
ຄມພ ຄຸນນະທຳ.
31 *ກ* 2 ປຕ 1:5–8.
33 *ກ* 1 ນຟ 13:42;
3 ນຟ 16:4–13;
ຄພ 90:8–9.
34 *ກ* ຄພ 112:21.

ຄຣິດ, ແລະ ທຳອິດໃຫ້ແກ່ຄົນຕ່າງຊາດ
ແລະ ຕໍ່ໄປໃຫ້ແກ່ຊາວຢິວ.
36 ກສະພາສູງປະຈຳທີ່, ທີ່ສະເຕກຂອງ
ຊີໂອນ, ປະກອບເປັນກຸ່ມເທົ່າທຽມກັນໃນ
ສິດອຳນາດໃນພາລະກິດຂອງສາດສະໜາ
ຈັກ, ໃນການຕັດສິນທັງໝົດຂອງເຂົາເຈົ້າ,
ກັບກຸ່ມຂອງຝ່າຍປະທານ, ຫລື ກັບສະພາ
ສູງເຄື່ອນທີ່.
37 ສະພາສູງໃນຊີໂອນ ປະກອບເປັນ
ກຸ່ມເທົ່າທຽມກັນ ໃນສິດອຳນາດໃນພາລະ
ກິດຂອງສາດສະໜາຈັກ, ໃນການຕັດສິນ
ທັງໝົດຂອງເຂົາເຈົ້າ, ກັບສະພາອັກຄະ
ສາວົກສິບສອງທີ່ສະເຕກຂອງຊີໂອນ.
38 ມັນເປັນໜ້າທີ່ຂອງສະພາສູງເຄື່ອນ
ທີ່ ທີ່ຈະເອີ້ນສາວົກ ກເຈັດສິບ, ເມື່ອເຂົາ
ເຈົ້າຕ້ອງການຄວາມຊ່ວຍເຫລືອ, ເພື່ອບັນ
ລຸການເອີ້ນຕ່າງໆໃນການສັ່ງສອນ ແລະ
ການປະຕິບັດພຣະກິດຕິຄຸນ, ແທນທີ່ຈະ
ເປັນຄົນອື່ນໆ.
39 ມັນເປັນໜ້າທີ່ຂອງອັກຄະສາວົກສິບ
ສອງ, ໃນສາຂາໃຫຍ່ທັງປວງຂອງສາດສະ
ໜາຈັກ, ທີ່ຈະແຕ່ງຕັ້ງເປັນ ກຜູ້ປະກາດຂ່າວ
ປະເສີດ, ດັ່ງທີ່ພວກເພິ່ນຈະຖືກມອບໝາຍ
ໃຫ້ແກ່ພວກເພິ່ນໂດຍການເປີດເຜີຍ—
40 ລະບຽບຂອງຖານະປະໂລຫິດນີ້ ໄດ້
ຖືກຢືນຢັນໃຫ້ສົ່ງຕໍ່ຈາກພໍ່ໄປໃຫ້ລູກຊາຍ,
ແລະ ເປັນຕະກຸນໂດຍແທ້ທີ່ເລືອກໄວ້, ຊຶ່ງ
ຄຳສັນຍາໄດ້ຖືກເຮັດໄວ້ກັບຜູ້ຄົນເຫລົ່າ
ນັ້ນ.
41 ລະບຽບນີ້ໄດ້ຖືກແຕ່ງຕັ້ງຂຶ້ນໃນວັນ
ເວລາຂອງ ກອາດາມ, ແລະ ໄດ້ຖືກສົ່ງຕໍ່ມາ
ໂດຍ ຂທາຍາດໃນລັກສະນະດັ່ງຕໍ່ໄປນີ້:
42 ຈາກອາດາມ ເຖິງ ກເຊດ, ຜູ້ໄດ້ຖືກ
ແຕ່ງຕັ້ງໂດຍອາດາມຕອນມີອາຍຸໄດ້ຫົກ
ສິບເກົ້າປີ, ແລະ ໄດ້ຮັບພອນຈາກລາວ
ສາມປີກ່ອນລາວ (ອາດາມ) ໄດ້ສິ້ນຊີວິດ
ໄປ, ແລະ ໄດ້ຮັບຄຳສັນຍາຂອງພຣະ
ຜູ້ເປັນເຈົ້າຜ່ານບິດາຂອງລາວ, ວ່າລູກ
ຫລານຂອງລາວຈະເປັນຜູ້ຖືກເລືອກຂອງ
ພຣະຜູ້ເປັນເຈົ້າ, ແລະ ວ່າພວກເຂົາຈະຖືກ
ປົກປັກຮັກສາໄວ້ຈົນເຖິງທີ່ສຸດຂອງແຜ່ນ
ດິນໂລກ;
43 ເພາະລາວ (ເຊດ) ເປັນຄົນ ກດີພ້ອມ,
ແລະ ຂລັກສະນະຂອງລາວເປັນເໝືອນລັກ
ສະນະຂອງບິດາຂອງລາວ, ເຖິງຂະໜາດ
ທີ່ລາວເບິ່ງຄືກັນກັບບິດາຂອງລາວໃນທຸກ
ສິ່ງ, ແລະ ແຕກຕ່າງແຕ່ອາຍຸໄຂຂອງລາວ
ເທົ່ານັ້ນ.
44 ເອໂນດໄດ້ຖືກແຕ່ງຕັ້ງຕອນມີອາຍຸ
ໄດ້ໜຶ່ງຮ້ອຍສາມສິບສີ່ປີ ແລະ ສີ່ເດືອນ,
ໂດຍມືຂອງອາດາມ.
45 ພຣະເຈົ້າໄດ້ເອີ້ນເກນານຢູ່ໃນຖິ່ນ
ແຫ້ງແລ້ງກັນດານຕອນມີອາຍຸໄດ້ສີ່ສິບປີ;
ແລະ ລາວໄດ້ພົບກັບອາດາມໃນລະຫວ່າງ
ການເດີນທາງໄປເຊດໍເລມັກ. ລາວມີອາ
ຍຸໄດ້ແປດສິບເຈັດປີເມື່ອລາວໄດ້ຮັບການ
ແຕ່ງຕັ້ງຂອງລາວ.
46 ມະຫາລາເລນມີອາຍຸໄດ້ສີ່ຮ້ອຍເກົ້າ
ສິບຫົກປີ ແລະ ເຈັດມື້ ຕອນລາວໄດ້ຖືກ
ແຕ່ງຕັ້ງໂດຍມືຂອງອາດາມ, ຜູ້ຊຶ່ງໄດ້ໃຫ້
ພອນແກ່ລາວຄືກັນ.
47 ຢາເຣັດມີອາຍຸໄດ້ສອງຮ້ອຍປີ
ຕອນລາວໄດ້ຖືກແຕ່ງຕັ້ງພາຍໃຕ້ມືຂອງ
ອາດາມ, ຜູ້ຊຶ່ງໄດ້ໃຫ້ພອນແກ່ລາວຄືກັນ.

36 *ກ* ຄມພ ສະພາສູງ.
38 *ກ* ຄມພ ສາວົກເຈັດສິບ.
39 *ກ* ຄມພ ປິຕຸ, ແຫ່ງປິຕຸ; ຜູ້ປະກາດຂ່າວ.
41 *ກ* ຄມພ ອາດາມ.
*ຂ* ປຖກ 5; ຄພ 84:6–16; ມຊ 6:10–25.
42 *ກ* ຄມພ ເຊດ.
43 *ກ* ຄມພ ດີພ້ອມທຸກຢ່າງ.
*ຂ* ປຖກ 5:3.

48 [ກ]ເອນົກ ມີ ອາ ຍຸ ໄດ້ ຊາວ ຫ້າ ປີ ຕອນ
ລາວ ໄດ້ ຮັບ ການ ແຕ່ງ ຕັ້ງ ພາຍ ໃຕ້ ມື
ຂອງອາດາມ; ແລະ ລາວໄດ້ຮັບພອນ
ຈາກອາດາມຕອນລາວມີອາ ຍຸໄດ້ຫົກ
ສິບຫ້າປີ.

49 ແລະ ລາວໄດ້ເຫັນພຣະຜູ້ເປັນເຈົ້າ,
ແລະ ລາວໄດ້ຕິດຕາມພຣະອົງ, ແລະ ໄດ້
ຢູ່ຕໍ່ພຣະພັກຂອງພຣະອົງສະເໝີໄປ; ແລະ
ລາວໄດ້ [ກ]ຕິດຕາມພຣະເຈົ້າໄປຕື່ມອີກ
ສາມຮ້ອຍຫົກສິບຫ້າປີ, ເຮັດໃຫ້ລາວມີອາ
ຍຸສີ່ຮ້ອຍສາມສິບປີຕອນລາວໄດ້ຖືກ [ຂ]ຮັບ
ໄປ.

50 [ກ]ເມທູ ເຊລາ ມີ ອາ ຍຸ ໄດ້ ໜຶ່ງ ຮ້ອຍ ປີ
ຕອນລາວໄດ້ຖືກແຕ່ງຕັ້ງພາຍໃຕ້ມືຂອງ
ອາດາມ.

51 ລາ ເມັກ ມີ ອາ ຍຸ ໄດ້ ສາມ ສິບ ສອງ ປີ
ຕອນລາວໄດ້ຖືກແຕ່ງຕັ້ງພາຍໃຕ້ມືຂອງ
ເຊດ.

52 [ກ]ໂນອາມີອາຍຸໄດ້ສິບປີຕອນລາວໄດ້
ຖືກແຕ່ງຕັ້ງພາຍໃຕ້ມືຂອງເມທູເຊລາ.

53 ສາມປີກ່ອນການຕາຍຂອງອາດາມ,
ລາວ ໄດ້ເອີ້ນ ເຊດ, ເອໂນດ, ເກນານ,
ມະຫາ ລາເລນ, ຢາເຣັດ, ເອນົກ, ແລະ
ເມທູເຊລາ, ຜູ້ເປັນ [ກ]ມະຫາປະໂລຫິດທຸກ
ຄົນ, ກັບລູກຫລານຜູ້ທີ່ເຫລືອຢູ່ຂອງລາວ
ຊຶ່ງເປັນຜູ້ຊອບທຳ, ເຂົ້າໄປໃນຮ່ອມພູຂອງ
[ຂ]ອາດາມ-ອອນໄດ-ອາມັນ, ແລະ ໃຫ້ພອນ
ສຸດທ້າຍຂອງລາວແກ່ພວກເຂົາຢູ່ບ່ອນ
ນັ້ນ.

54 ແລະ ພຣະຜູ້ເປັນເຈົ້າໄດ້ປະກົດແກ່
ພວກເຂົາ, ແລະ ພວກເຂົາໄດ້ລຸກຂຶ້ນ ແລະ
ໃຫ້ພອນແກ່ [ກ]ອາດາມ, ແລະ ເອີ້ນລາວວ່າ
[ຂ]ມີຄາເອນ, ເຈົ້າຊາຍ, ທູດ.

55 ແລະ ພຣະຜູ້ເປັນເຈົ້າໄດ້ປະຕິບັດ
ການປອບໂຍນແກ່ອາດາມ, ແລະ ໄດ້ກ່າວ
ກັບລາວວ່າ: ເຮົາໄດ້ຕັ້ງເຈົ້າໃຫ້ເປັນຫົວ
ໜ້າ; ປະຊາຊາດຢ່າງຫລວງຫລາຍຈະມາ
ຫາເຈົ້າ, ແລະ ເຈົ້າຄື [ກ]ເຈົ້າຊາຍເໜືອພວກ
ເຂົາຕະຫລອດການ.

56 ແລະ ອາດາມໄດ້ຢືນຢູ່ໃນທ່າມກາງ
ການປະຊຸມ; ແລະ, ເຖິງແມ່ນວ່າຫລັງຂອງ
ລາວກໍກົ່ມເພາະອາຍຸໄຂ, ໂດຍທີ່ເຕັມໄປ
ດ້ວຍພຣະວິນຍານບໍລິສຸດ, ແຕ່ໄດ້ບອກ
ລ່ວງໜ້າເຖິງເລື່ອງໃດກໍຕາມທີ່ຈະ [ກ]ບັງ
ເກີດຂຶ້ນກັບລູກຫລານຂອງລາວຈົນເຖິງ
ລຸ້ນສຸດທ້າຍ.

57 ສິ່ງ ເຫລົ່າ ນີ້ ທັງ ໝົດ ໄດ້ ຖືກ ຂຽນ ໄວ້
ຢູ່ ໃນ ໜັງ ສື ຂອງ ເອນົກ, ແລະ ຈະ ເປັນ
ພະຍານເຖິງໃນເວລາທີ່ເໝາະສົມ.

58 ມັນ ເປັນ ໜ້າ ທີ່ ຂອງ ອັກຄະ ສາວົກ
[ກ]ສິບສອງນຳອີກທີ່ຈະ [ຂ]ແຕ່ງຕັ້ງ ແລະ ວາງ
ລະບຽບເຈົ້າໜ້າທີ່ອື່ນໆຂອງສາດສະໜາ
ຈັກ, ໃຫ້ສອດຄ່ອງກັບການເປີດເຜີຍຊຶ່ງ
ກ່າວວ່າ:

59 ເຖິງສາດສະໜາຈັກຂອງພຣະຄຣິດ
ໃນ ແຜ່ນ ດິນຊີໂອນ, ນອກ ເໜືອ ໄປຈາກ
[ກ]ກົດຂອງສາດສະໜາຈັກກ່ຽວກັບທຸລະກິດ
ຂອງສາດສະໜາຈັກ—

60 ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ກັບ
ພວກເຈົ້າ, ຈອນໂຍທາໄດ້ກ່າວວ່າ ຈຳເປັນ

---

48 *ກ* ຄມພ ເອນົກ.
49 *ກ* ປຖກ 5:22; ຮຣ 11:5; ມຊ 7:69.
*ຂ* ຄມພ ບຸກຄົນທີ່ຖືກປ່ຽນສະພາບແລ້ວ.
50 *ກ* ຄມພ ເມທູເຊລາ.
52 *ກ* ຄມພ ໂນອາ, ປີຕຸໃນພຣະຄຣິສຕະທຳຄຳພີ.
53 *ກ* ຄມພ ມະຫາປະໂລຫິດ.
*ຂ* ຄພ 78:15; 116. ຄມພ ອາດາມ-ອອນໄດ-ອາມັນ.
54 *ກ* ຄພ 128:21. ຄມພ ອາດາມ.
*ຂ* ຄມພ ມີຄາເອນ.
55 *ກ* ຄພ 78:16.
56 *ກ* ມຊ 5:10.
58 *ກ* ຄມພ ອັກຄະສາວົກ.
*ຂ* ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
59 *ກ* ຄພ 43:2–9.

ຕ້ອງມີແອວເດີ [ກ]ຜູ້ຄວບຄຸມເພື່ອຄວບຄຸມ
ຄົນເຫລົ່ານັ້ນທີ່ຢູ່ໃນຕຳແໜ່ງແອວເດີ;

61 ແລະ [ກ]ປະໂລຫິດນຳອີກເພື່ອຄວບ
ຄຸມຄົນເຫລົ່ານັ້ນທີ່ຢູ່ໃນຕຳແໜ່ງຂອງປະ
ໂລຫິດ;

62 ແລະ ຄູສອນນຳອີກເພື່ອ [ກ]ຄວບຄຸມ
ຄົນເຫລົ່ານັ້ນທີ່ຢູ່ໃນຕຳແໜ່ງຄູສອນ, ໃນວິ
ທີດຽວກັນ, ແລະ ມັກຄະນາຍົກນຳອີກ—

63 ດັ່ງນັ້ນ, ຈາກມັກຄະນາຍົກເຖິງຄູ
ສອນ, ແລະ ຈາກຄູສອນເຖິງປະໂລຫິດ,
ແລະ ຈາກປະໂລຫິດເຖິງແອວເດີ, ເປັນ
ສ່ວນບຸກຄົນຕາມທີ່ພວກເຂົາໄດ້ຖືກແຕ່ງ
ຕັ້ງ, ຕາມພັນທະສັນຍາ ແລະ ບັນຍັດຂອງ
ສາດສະໜາຈັກ.

64 ຈາກນັ້ນ ເຖິງຖານະປະໂລຫິດສູງ,
ຊຶ່ງສຳຄັນທີ່ສຸດເໜືອທຸກຕຳແໜ່ງ.

65 ດັ່ງນັ້ນ, ມັນຈຶ່ງຈຳເປັນວ່າຕ້ອງໄດ້
ແຕ່ງຕັ້ງຄົນໜຶ່ງໃນຖານະປະໂລຫິດສູງໃຫ້
ຄວບຄຸມຖານະປະໂລຫິດ, ແລະ ລາວຈະ
ຖືກເອີ້ນວ່າປະທານຂອງຖານະປະໂລຫິດ
ສູງຂອງສາດສະໜາຈັກ;

66 ຫລື, ອີກຄຳໜຶ່ງ, ມະຫາປະໂລຫິດ
[ກ]ຄວບຄຸມຖານະປະໂລຫິດສູງຂອງສາດ
ສະໜາຈັກ.

67 ຈາກຄົນດຽວກັນນັ້ນ ການປະຕິບັດພິ
ທີການ ແລະ ພອນມາເຖິງສາດສະໜາຈັກ,
ໂດຍ [ກ]ການວາງມື.

68 ດັ່ງນັ້ນ, ຕຳແໜ່ງຂອງອະທິການຈຶ່ງບໍ່
ເທົ່າທຽມກັບຕຳແໜ່ງນັ້ນ; ເພາະຕຳແໜ່ງ
ຂອງ [ກ]ອະທິການຢູ່ໃນການປະຕິບັດເລື່ອງ
ຝ່າຍໂລກທັງປວງ;

69 ເຖິງຢ່າງໃດກໍຕາມ ອະທິການຈະ
ຕ້ອງຖືກເລືອກຈາກ [ກ]ຖານະປະໂລຫິດສູງ,
ຍົກເວັ້ນແຕ່ລາວມາຈາກ [ຂ]ຕະກຸນໂດຍແທ້
ຂອງອາໂຣນເທົ່ານັ້ນ;

70 ເພາະຍົກເວັ້ນແຕ່ລາວມາຈາກຕະ
ກຸນໂດຍແທ້ຂອງອາໂຣນເທົ່ານັ້ນ ລາວບໍ່
ສາມາດຖືຂໍກະແຈຂອງຖານະປະໂລຫິດ
ນັ້ນ.

71 ເຖິງຢ່າງໃດກໍຕາມ, ມະຫາປະໂລຫິດ
ຄົນໜຶ່ງ, ຕາມລະບຽບຂອງເມນຄີເສເດັກ,
ອາດຖືກແຕ່ງຕັ້ງເປັນທາງການສຳລັບການ
ປະຕິບັດເລື່ອງຝ່າຍໂລກ, ໂດຍມີຄວາມຮູ້
ກ່ຽວກັບເລື່ອງເຫລົ່ານັ້ນໂດຍພຣະວິນຍານ
ແຫ່ງຄວາມຈິງ;

72 ແລະ ເພື່ອເປັນ [ກ]ຜູ້ຕັດສິນໃນອິດສະ
ຣາເອນ ນຳອີກ, ເພື່ອເຮັດທຸລະກິດຂອງ
ສາດສະໜາຈັກ, ເພື່ອນັ່ງໃນການຕັດສິນ
ຄົນລ່ວງລະເມີດ ຕາມປະຈັກພະຍານດັ່ງ
ທີ່ມັນວາງຢູ່ຕໍ່ໜ້າຂອງລາວຕາມກົດ, ໂດຍ
ຄວາມຊ່ວຍເຫລືອຂອງທີ່ປຶກສາຂອງລາວ,
ຜູ້ທີ່ລາວໄດ້ເລືອກ ຫລື ຈະເລືອກຈາກບັນ
ດາພວກແອວເດີຂອງສາດສະໜາຈັກ.

73 ນີ້ເປັນໜ້າທີ່ຂອງອະທິການ ຜູ້ບໍ່ໄດ້
ເປັນຕະກຸນໂດຍແທ້ຂອງອາໂຣນ, ແຕ່ໄດ້
ຖືກແຕ່ງຕັ້ງສູ່ຖານະປະໂລຫິດສູງຕາມ
ລະບຽບຂອງເມນຄີເສເດັກ.

74 ດັ່ງນັ້ນລາວຈະເປັນຜູ້ຕັດສິນ, ແມ່ນ
ແຕ່ຜູ້ຕັດສິນທົ່ວໄປໃນບັນດາຜູ້ອາໄສຂອງ
ຊີໂອນ, ຫລື ໃນສະເຕກແຫ່ງຊີໂອນ, ຫລື
ໃນສາຂາໃດໆຂອງສາດສະໜາຈັກ ບ່ອນ
ທີ່ລາວຈະຖືກແຕ່ງຕັ້ງເປັນທາງການສູ່ການ
ປະຕິບັດສາດສະໜາກິດນີ້, ຈົນກວ່າເຂດ
ແດນຂອງຊີໂອນຈະຂະຫຍາຍກວ້າງອອກ

60 *ກ* ຄພ 107:89–90.
61 *ກ* ຄພ 107:87.
62 *ກ* ຄພ 107:85–86.
66 *ກ* ຄພ 107:9, 91–92.
ຄນພ ປະທານ.
67 *ກ* ຄນພ ມື, ການວາງ.
68 *ກ* ຄນພ ອະທິການ.
69 *ກ* ຄນພ ຖານະປະໂລຫິດ
ແຫ່ງເມນຄີເສເດັກ.
*ຂ* ຄພ 68:14–24; 84:18;
107:13–17.
72 *ກ* ຄພ 58:17–18.

ໄປ ແລະ ຈຳເປັນຕ້ອງມີອະທິການ ຫລື ຜູ້ຕັດສິນຄົນອື່ນອີກໃນຊີໂອນ ຫລື ໃນບ່ອນອື່ນ.

75 ແລະ ຕາບໃດທີ່ມີອະທິການຄົນອື່ນຖືກ ແຕ່ງຕັ້ງໄວ້ ແລ້ວພວກເຂົາຈະກະທຳໃນຕຳແໜ່ງດຽວກັນນັ້ນ.

76 ແຕ່ ຕະ ກຸນ ໂດຍ ແທ້ ຂອງ ອາໂຣນມີສິດ ຢ່າງ ຖືກ ຕ້ອງ ໃນ ການ ເປັນ ຝ່າຍປະທານຂອງຖານະປະໂລຫິດນີ້, ໃນ [ກ]ຂໍກະແຈຂອງການປະຕິບັດສາດສະໜາກິດນີ້, ໃນການກະທຳໃນຕຳແໜ່ງອະທິການ ໂດຍອິດສະລະ, ໂດຍບໍ່ຕ້ອງມີທີ່ປຶກສາ, ຍົກເວັ້ນແຕ່ໃນກໍລະນີທີ່ປະທານຂອງຖານະປະໂລຫິດສູງ, ຕາມລະບຽບຂອງເມນຄີເສເດັກ, ຈະຖືກພິຈາລະນາຄະດີ, ໃນການນັ່ງເປັນຜູ້ຕັດສິນໃນອິດສະຣາເອນ.

77 ແລະ ການຕັດສິນຂອງສະພາໃດໜຶ່ງຂອງສະພາເຫລົ່ານີ້, ໂດຍສອດຄ່ອງກັບບັນຍັດຊຶ່ງກ່າວວ່າ:

78 ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ, ເຮົາກ່າວກັບພວກເຈົ້າວ່າ ທຸລະກິດທີ່ສຳຄັນທີ່ສຸດຂອງສາດສະໜາຈັກ, ແລະ ເລື່ອງທີ່ [ກ]ຫຍຸ້ງຍາກທີ່ສຸດຂອງສາດສະໜາຈັກ, ຕາບໃດທີ່ບໍ່ມີຄວາມພໍໃຈກັບການຕັດສິນຂອງອະທິການ ຫລື ຜູ້ຕັດສິນ, ມັນຈະຖືກສົ່ງຕໍ່ ແລະ ຍື່ນຂຶ້ນເຖິງສະພາຂອງສາດສະໜາຈັກ, ຕໍ່ໜ້າ [ຂ]ຝ່າຍປະທານຂອງຖານະປະໂລຫິດສູງ.

79 ແລະ ຝ່າຍ ປະທານ ສະພາ ຂອງຖານະປະໂລຫິດສູງ ຈະມີອຳນາດທີ່ຈະເອີ້ນໃຫ້ມະຫາປະໂລຫິດສູງຄົນອື່ນໆ, ແມ່ນແຕ່ສິບສອງຄົນ, ມາຊ່ວຍເປັນທີ່ປຶກສາ; ແລະ ດັ່ງນັ້ນຝ່າຍປະທານຂອງຖານະປະໂລຫິດສູງ ແລະ ທີ່ປຶກສາຂອງຝ່າຍປະທານຈະມີອຳນາດທີ່ຈະຕັດສິນຕາມປະຈັກພະຍານຕາມກົດຂອງສາດສະໜາຈັກ.

80 ແລະ ຫລັງຈາກການຕັດສິນນີ້ ມັນຈະບໍ່ຖືກຈື່ຈຳອີກຢູ່ຕໍ່ໜ້າພຣະພັກຂອງພຣະຜູ້ເປັນເຈົ້າ; ເພາະນີ້ເປັນສະພາສູງສຸດຂອງສາດສະໜາຈັກຂອງພຣະເຈົ້າ, ແລະ ເປັນການຕັດສິນຊີ້ຂາດກ່ຽວກັບການຖົກຖຽງກັນເລື່ອງຝ່າຍວິນຍານ.

81 ບໍ່ມີຄົນໃດທີ່ເປັນຂອງສາດສະໜາຈັກທີ່ຖືກຍົກເວັ້ນຈາກສະພານີ້ຂອງສາດສະໜາຈັກ.

82 ແລະ ຕາບໃດທີ່ປະທານຂອງຖານະປະໂລຫິດສູງຈະລ່ວງລະເມີດ, ລາວຈະຖືກຈື່ຈຳຢູ່ຕໍ່ໜ້າສະພາທົ່ວໄປຂອງສາດສະໜາຈັກ, ຜູ້ຈະໄດ້ຮັບຄວາມຊ່ວຍເຫລືອຈາກທີ່ປຶກສາສິບສອງຄົນຂອງຖານະປະໂລຫິດສູງ;

83 ແລະ ການຕັດສິນຂອງເຂົາເຈົ້າ ທີ່ຢູ່ເທິງຫົວຂອງລາວ ຈະຢຸດຕິການຖົກຖຽງກັນກ່ຽວກັບລາວ.

84 ດັ່ງນັ້ນ, ບໍ່ມີຄົນໃດຈະຖືກຍົກເວັ້ນຈາກ [ກ]ຄວາມ ຍຸດຕິທຳ ແລະ ກົດ ຂອງພຣະເຈົ້າ, ເພື່ອວ່າທຸກສິ່ງຈະຖືກກະທຳໄປຕາມລະບຽບ ແລະ ໃນຄວາມນອບນ້ອມຢູ່ຕໍ່ພຣະພັກຂອງພຣະອົງ, ຕາມຄວາມຈິງ ແລະ ຄວາມຊອບທຳ.

85 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ໜ້າທີ່ຂອງປະທານເໜືອຕຳແໜ່ງ [ກ]ມັກຄະນາຍົກ ຄືຄວບຄຸມມັກຄະນາຍົກສິບສອງຄົນ, ເພື່ອ

76 ກ ຄມພ ຂໍກະແຈຂອງຖານະປະໂລຫິດ.
78 ກ ຄພ 102:13, 28.
ຂ ຄພ 68:22.
84 ກ ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
85 ກ ຄມພ ມັກຄະນາຍົກ.

ນັ່ງຢູ່ໃນສະພາກັບພວກເຂົາ, ແລະ ເພື່ອ
[ຂ]ສິດສອນ ໜ້າທີ່ໃຫ້ພວກເຂົາ, ເສີມສ້າງ
ກັນແລະກັນ, ດັ່ງທີ່ມັນຖືກມອບໃຫ້ໄວ້ໃນ
ພັນທະສັນຍາ.
86 ແລະ ໜ້າທີ່ຂອງປະທານເໜືອຕຳ
ແໜ່ງຄູສອນນຳອີກ ຄືຄວບຄຸມ [ກ]ຄູສອນ
ຊາວສີ່ຄົນ, ແລະ ເພື່ອນັ່ງຢູ່ໃນສະພາກັບ
ພວກເຂົາ, ສິດສອນໜ້າທີ່ໃຫ້ພວກເຂົາ,
ດັ່ງທີ່ມັນຖືກມອບໃຫ້ໄວ້ໃນພັນທະສັນຍາ.
87 ໜ້າທີ່ຂອງປະທານເໜືອຖານະປະ
ໂລຫິດແຫ່ງອາໂຣນນຳອີກ ຄືຄວບຄຸມ
[ກ]ປະໂລຫິດສີ່ສິບແປດຄົນ, ແລະ ນັ່ງຢູ່ໃນ
ສະພາກັບພວກເຂົາ, ເພື່ອສິດສອນໜ້າທີ່
ໃຫ້ພວກເຂົາ, ດັ່ງທີ່ມັນຖືກມອບໃຫ້ໄວ້ໃນ
ພັນທະສັນຍາ—
88 ປະທານຄົນນີ້ຕ້ອງເປັນ [ກ]ອະທິການ;
ເພາະນີ້ຄືໜ້າທີ່ໜຶ່ງຂອງຖານະປະໂລຫິດ
ນີ້.
89 ອີກເທື່ອໜຶ່ງ, ໜ້າທີ່ຂອງປະທານ
ເໜືອຕຳແໜ່ງຂອງ [ກ]ແອວເດີ ຄືຄວບຄຸມ
ແອວເດີເກົ້າສິບຫົກຄົນ, ແລະ ເພື່ອນັ່ງໃນ
ສະພາກັບພວກເຂົາ, ແລະ ເພື່ອສິດສອນ
ພວກເຂົາຕາມພັນທະສັນຍາ.
90 ຝ່າຍປະທານນີ້ແຕກຕ່າງຈາກສາວົກ
ເຈັດສິບ, ແລະ ຖືກມອບໝາຍໃຫ້ຄົນເຫລົ່າ
ນັ້ນທີ່ບໍ່ [ກ]ເດີນທາງໄປທົ່ວໂລກ.
91 ແລະ ອີກເທື່ອໜຶ່ງ, ໜ້າທີ່ຂອງ
ປະທານຂອງຕຳແໜ່ງຖານະປະໂລຫິດ
ສູງ ຄື [ກ]ຄວບຄຸມທັງສາດສະໜາຈັກ, ແລະ
ເປັນເໝືອນດັ່ງ [ຂ]ໂມເຊ—
92 ຈົ່ງເບິ່ງ, ນີ້ຄືປັນຍາ; ແທ້ຈິງແລ້ວ, ຄື
ເປັນ [ກ]ຜູ້ພະຍາກອນ, [ຂ]ຜູ້ເປີດເຜີຍ, ຜູ້ແປ,
ແລະ [ຄ]ສາດສະດາ, ໂດຍມີ [ງ]ຂອງປະທານ
ທັງປວງຂອງພຣະເຈົ້າ ຊຶ່ງມອບໃຫ້ແກ່ຫົວ
ໜ້າຂອງສາດສະໜາຈັກ.
93 ແລະ ເປັນໄປຕາມພາບນິມິດທີ່ສະ
ແດງໃຫ້ເຫັນກ່ຽວກັບລະບຽບຂອງ [ກ]ສາວົກ
ເຈັດສິບ, ວ່າເຂົາເຈົ້າຈະມີປະທານເຈັດຄົນ
ປົກຄອງເຂົາເຈົ້າ, ຊຶ່ງເລືອກຈາກບັນດາ
ສາວົກເຈັດສິບ;
94 ແລະ ຄົນໜຶ່ງໃນປະທານເຈັດຄົນນີ້
ຈະຄວບຄຸມປະທານຫົກຄົນ;
95 ແລະ ປະທານເຈັດຄົນນີ້ຕ້ອງໄດ້
ເລືອກອີກເຈັດສິບຄົນ ນອກເໜືອໄປຈາກ
ເຈັດສິບຄົນທຳອິດທີ່ເຂົາເຈົ້າເປັນພາກ
ສ່ວນ, ແລະ ຕ້ອງຄວບຄຸມຄົນເຫລົ່ານັ້ນ;
96 ແລະ ເຈັດສິບຄົນອື່ນນຳອີກ, ຈົນ
ກວ່າມີເຈັດຄູນເຈັດສິບ, ຖ້າຫາກວຽກງານ
ຢູ່ໃນສວນອະງຸ່ນຮຽກຮ້ອງດ້ວຍຄວາມຈຳ
ເປັນ.
97 ແລະ ສາວົກເຈັດສິບເຫລົ່ານີ້ຕ້ອງ
ເປັນຜູ້ປະຕິບັດສາດສະໜາກິດ [ກ]ເຄື່ອນທີ່,
ໄປຍັງຄົນຕ່າງຊາດກ່ອນແລະ ໄປຍັງຊາວ
ຢິວນຳອີກ.
98 ໃນຂະນະທີ່ເຈົ້າໜ້າທີ່ຄົນອື່ນໆຂອງ
ສາດສະໜາຈັກ, ຜູ້ບໍ່ໄດ້ຢູ່ໃນກຸ່ມອັກຄະ
ສາວົກສິບສອງ, ທັງບໍ່ໄດ້ຢູ່ໃນກຸ່ມສາວົກ
ເຈັດສິບ, ບໍ່ໄດ້ຢູ່ພາຍໃຕ້ໜ້າທີ່ຮັບຜິດຊອບ
ທີ່ຈະເດີນທາງໄປໃນບັນດາປະຊາຊາດ
ທັງປວງ, ແຕ່ຕ້ອງເດີນທາງຕາມສະຖານະ

85 *ຂ* ຄພ 38:23; 88:77–79, 118.
86 *ກ* ຄພ 20:53–60. ຄມພ ຄູສອນ, ຖານະປະໂລຫິດແຫ່ງອາໂຣນ.
87 *ກ* ຄມພ ປະໂລຫິດ, ຖານະປະໂລຫິດແຫ່ງອາໂຣນ.
88 *ກ* ຄມພ ອະທິການ.
89 *ກ* ຄມພ ແອວເດີ.
90 *ກ* ຄພ 124:137.
91 *ກ* ຄພ 107:9, 65–67.
*ຂ* ຄພ 28:2; 103:16–21.
92 *ກ* ມຊຍ 8:13–18. ຄມພ ຜູ້ພະຍາກອນ.
*ຂ* ຄມພ ເປີດເຜີຍ, ການເປີດເຜີຍ.
*ຄ* ຄພ 21:1. ຄມພ ສາດສະດາ.
*ງ* ຄມພ ຂອງປະທານແຫ່ງພຣະວິນຍານ.

ການຂອງເຂົາເຈົ້າຈະອຳນວຍ, ທັງໆທີ່ເຂົາເຈົ້າອາດດຳລົງຕຳແໜ່ງສູງ ແລະ ມີໜ້າທີ່ຮັບຜິດຊອບເທົ່າທຽມກັບຄົນເຫລົ່ານັ້ນ ໃນສາດສະໜາຈັກກໍຕາມ.

99 ດັ່ງ ນັ້ນ, ບັດ ນີ້ ໃຫ້ ທຸກໆ ຄົນ ຮຽນ ຮູ້ [ກ]ໜ້າທີ່ຂອງຕົນ, ແລະ ກະທຳໃນຕຳແໜ່ງທີ່ເຂົາຖືກກຳນົດໃຫ້, ດ້ວຍ [ຂ]ຄວາມພາກພຽນທັງໝົດ.

100 ຄົນທີ່ [ກ]ກຽດຄ້ານ ຈະ ບໍ່ ຖືກ ນັບ ວ່າ ມີ [ຂ]ຄ່າຄວນທີ່ຈະຢືນຢູ່, ແລະ ຄົນທີ່ບໍ່ຮຽນຮູ້ໜ້າທີ່ຂອງຕົນ ແລະ ບໍ່ສະແດງຕົນໃຫ້ເປັນທີ່ພໍພຣະໄທ ຈະບໍ່ຖືກນັບວ່າມີຄ່າຄວນທີ່ຈະຢືນຢູ່. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 108

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 26 ເດືອນທັນວາ, 1835. ພາກນີ້ໄດ້ຮັບຕາມຄຳຂໍຮ້ອງຂອງໄລມັນ ເຊີແມນ, ຜູ້ທີ່ຫາກໍໄດ້ຖືກແຕ່ງຕັ້ງເປັນສາວົກເຈັດສິບ ແລະ ໄດ້ມາຫາສາດສະດາພ້ອມກັບຄຳຂໍຮ້ອງການເປີດເຜີຍເພື່ອຈະໄດ້ຮູ້ຈັກໜ້າທີ່ຂອງລາວ.*

*1–3, ໄລມັນ ເຊີແມນ ໄດ້ຖືກອະໄພບາບໃຫ້; 4–5, ລາວຈະຖືກນັບເຂົ້າຢູ່ໃນບັນດາພວກແອວເດີທີ່ເປັນຜູ້ນຳຂອງສາດສະໜາຈັກ; 6–8, ລາວຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ພວກອ້າຍນ້ອງຂອງລາວ.*

1 ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາໄລມັນ: ບາບຂອງເຈົ້າໄດ້ຖືກອະໄພໃຫ້ແລ້ວ, ເພາະເຈົ້າໄດ້ເຊື່ອຟັງສຽງຂອງເຮົາໃນການຂຶ້ນມາທີ່ນີ້ ເພື່ອຮັບຄຳແນະນຳຈາກລາວ ຜູ້ທີ່ເຮົາໄດ້ແຕ່ງຕັ້ງໄວ້.

2 ສະນັ້ນ, ໃຫ້ຈິດ ວິນ ຍານ ຂອງ ເຈົ້າ [ກ]ສະຫງົບກ່ຽວກັບສະພາບການທາງວິນຍານຂອງເຈົ້າ, ແລະ ຢ່າຂັດຂືນສຽງຂອງເຮົາອີກເລີຍ.

3 ແລະ ຈົ່ງລຸກຂຶ້ນ ແລະ ລະມັດລະວັງນັບແຕ່ນີ້ເປັນຕົ້ນໄປໃນການຍຶດຖືຄຳປະຕິຍານຂອງເຈົ້າ, ຊຶ່ງເຈົ້າໄດ້ເຮັດໄວ້ ແລະ ເຮັດຢູ່, ແລະ ເຈົ້າຈະໄດ້ຮັບພອນ ດ້ວຍພອນອັນຍິ່ງໃຫຍ່.

4 ຈົ່ງລໍຖ້າຢ່າງອົດທົນຈົນກວ່າຈະເອີ້ນ [ກ]ການຊຸມນຸມທີ່ສັກສິດຂອງຜູ້ຮັບໃຊ້ຂອງເຮົາ, ເມື່ອນັ້ນເຈົ້າຈະໄດ້ຖືກຈື່ຈຳພ້ອມກັບແອວເດີກຸ່ມທຳອິດຂອງເຮົາ, ແລະ ຮັບສິດໂດຍຜ່ານການແຕ່ງຕັ້ງພ້ອມກັບແອວເດີທີ່ເຫລືອຢູ່ຂອງເຮົາ ຜູ້ທີ່ເຮົາໄດ້ເລືອກໄວ້.

5 ຈົ່ງເບິ່ງ, ສິ່ງນີ້ຄື [ກ]ຄຳສັນຍາຂອງພຣະບິດາແກ່ເຈົ້າ ຖ້າເຈົ້າຊື່ສັດຕໍ່ໄປ.

93 *ກ* ຄພ 107:38.
ຄມພ ສາວົກເຈັດສິບ.
97 *ກ* ຄພ 124:138–139.
99 *ກ* ຄມພ ໜ້າທີ່.
*ຂ* ຄມພ ພາກພຽນ,
ຄວາມພາກພຽນ.
100 *ກ* ຄພ 58:26–29.
ຄມພ ກຽດຄ້ານ,
ຄວາມກຽດຄ້ານ.
*ຂ* ຄມພ ຄ່າຄວນ,
ການມີຄ່າຄວນ.
**108** 2 *ກ* ຄມພ ພັກຜ່ອນ.
4 *ກ* ຄພ 109:6–10.
5 *ກ* ຄພ 82:10.

6 ແລະ ມັນຈະບັງເກີດຂຶ້ນກັບເຈົ້າໃນວັນ
ນັ້ນທີ່ເຈົ້າຈະມີສິດທີ່ຈະ [ກ]ສັ່ງສອນພຣະກິດ
ຕິຄຸນຂອງເຮົາ ໃນບ່ອນໃດກໍຕາມທີ່ເຮົາຈະ
ສົ່ງເຈົ້າໄປ, ນັບແຕ່ເວລານັ້ນເປັນຕົ້ນໄປ.
7 ສະນັ້ນ, ຈົ່ງເພີ່ມ [ກ]ຄວາມເຂັ້ມແຂງໃຫ້
ແກ່ອ້າຍນ້ອງຂອງເຈົ້າໃນການສົນທະນາ
ທຸກຢ່າງຂອງເຈົ້າ, ໃນຄຳອະທິຖານທັງໝົດ
ຂອງເຈົ້າ, ໃນຄຳແນະນຳທັງປວງຂອງເຈົ້າ,
ແລະ ໃນການກະທຳທັງໝົດຂອງເຈົ້າ.
8 ແລະ ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາຢູ່ກັບ
ເຈົ້າ ເພື່ອອວຍພອນເຈົ້າ ແລະ [ກ]ປົດປ່ອຍ
ເຈົ້າຕະຫລອດການ. ອາແມນ.

## ພາກທີ 109

*ຄຳອະທິຖານທີ່ກ່າວອຸທິດພຣະວິຫານທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 27 ເດືອນມີນາ, 1836. ອີງຕາມໃບຖະແຫລງການຂອງສາດສະດາ, ຄຳອະທິຖານນີ້ໄດ້ຖືກມອບໃຫ້ແກ່ເພິ່ນໂດຍການເປີດເຜີຍ.*

*1–5, ພຣະວິຫານເຄີດແລນໄດ້ຖືກສ້າງຂຶ້ນເພື່ອເປັນສະຖານທີ່ໃຫ້ບຸດມະນຸດສະເດັດມາຢ້ຽມຢາມ; 6–21, ມັນຄວນເປັນບ້ານແຫ່ງການອະທິຖານ, ຖືສິນອົດເຂົ້າ, ສັດທາ, ຮຽນຮູ້, ລັດສະໝີພາບ, ແລະ ລະບຽບ, ແລະ ບ້ານຂອງພຣະເຈົ້າ; 22–33, ຂໍໃຫ້ຄົນທີ່ບໍ່ກັບໃຈ ທີ່ຕໍ່ຕ້ານຜູ້ຄົນຂອງພຣະຜູ້ເປັນເຈົ້າຖືກເຮັດໃຫ້ສັບສົນ; 34–42, ຂໍໃຫ້ໄພ່ພົນຂອງພຣະເຈົ້າອອກໄປດ້ວຍອຳນາດເພື່ອເຕົ້າໂຮມຄົນຊອບທຳສູ່ຊີໂອນ; 43–53, ຂໍໃຫ້ໄພ່ພົນຂອງພຣະເຈົ້າຖືກປົດປ່ອຍຈາກສິ່ງໜ້າຢ້ານກົວທັງຫລາຍ ຊຶ່ງຈະຖອກເທລົງມາເທິງຄົນຊົ່ວໃນຍຸກສຸດທ້າຍ; 54–58, ຂໍໃຫ້ປະຊາຊາດ ແລະ ຜູ້ຄົນ ແລະ ສາດສະໜາຈັກທັງຫລາຍຕຽມຮັບພຣະກິດຕິຄຸນ; 59–67, ຂໍໃຫ້ຊາວຢິວ, ຊາວເລມັນ, ແລະ ຊາວອິດສະຣາເອນທັງຫລາຍໄດ້ຮັບການໄຖ່; 68–80, ຂໍໃຫ້ໄພ່ພົນຂອງພຣະເຈົ້າໄດ້ຮັບການສວມມົງກຸດດ້ວຍລັດສະໝີພາບ ແລະ ກຽດຕິຍົດ ແລະ ໄດ້ຮັບຄວາມລອດນິລັນດອນ.*

1 ຂໍ [ກ]ຂອບພຣະໄທແດ່ພຣະນາມຂອງ
ພຣະ ອົງ, ໂອ້ ອົງພຣະຜູ້ເປັນເຈົ້າຂອງ
ອິດສະຣາເອນ, ຜູ້ຮັກສາ [ຂ]ພັນທະສັນຍາ
ແລະ ສະແດງຄວາມເມດຕາແກ່ຜູ້ຮັບໃຊ້
ຂອງພຣະອົງຜູ້ເດີນໄປຢ່າງພາກພູມໃຈ ຕໍ່
ພຣະພັກຂອງພຣະອົງ, ດ້ວຍສຸດຫົວໃຈ
ຂອງພວກເຂົາ—
2 ພຣະອົງຜູ້ໄດ້ບັນຊາຜູ້ຮັບໃຊ້ຂອງ
ພຣະອົງໃຫ້ [ກ]ສ້າງບ້ານແດ່ພຣະນາມຂອງ
ພຣະອົງໃນສະຖານທີ່ນີ້ [ເຄີດແລນ].
3 ແລະ ບັດນີ້ ພຣະອົງເຫັນແລ້ວ, ໂອ້
ພຣະຜູ້ເປັນເຈົ້າ, ວ່າຜູ້ຮັບໃຊ້ຂອງພຣະອົງ
ໄດ້ເຮັດຕາມພຣະບັນຊາຂອງພຣະອົງ.
4 ແລະ ບັດນີ້ ພວກຂ້າພຣະອົງທູນຂໍ
ພຣະອົງ, ພຣະບິດາຜູ້ບໍລິສຸດ, ໃນພຣະ

6 ກ ຄມພ ວຽກງານເຜີຍແຜ່.
7 ກ ລກ 22:31–32.
8 ກ 2 ນຟ 9:19.
**109** 1 ກ ແອວ 37:37;
ຄພ 46:32.
ຄມພ ຂອບຄຸນ, ຂອບ
ໃຈ, ຄວາມຂອບຄຸນ.
ຂ ດນອ 9:4.
ຄມພ ພັນທະສັນຍາ.
2 ກ ຄພ 88:119.

ນາມຂອງພຣະເຢຊູຄຣິດ, ພຣະບຸດຈາກຊວງເອິກຂອງພຣະອົງ, ຊຶ່ງໃນພຣະນາມຂອງພຣະອົງເທົ່ານັ້ນທີ່ຄວາມລອດສາມາດຖືກປະຕິບັດຕໍ່ລູກຫລານມະນຸດ, ພວກຂ້າພຣະອົງທູນຂໍພຣະອົງ, ໂອ້ ພຣະອົງເຈົ້າເອີຍ, ໂປດຮັບ [ກ]ບ້ານຫລັງນີ້, ອັນເປັນ [ຂ]ຝີມືຂອງພວກຂ້າພຣະອົງ, ຜູ້ຮັບໃຊ້ຂອງພຣະອົງ, ຊຶ່ງພຣະອົງໄດ້ບັນຊາພວກຂ້າພຣະອົງໃຫ້ສ້າງ.

5 ເພາະພຣະອົງຮູ້ວ່າ ພວກຂ້າພຣະອົງໄດ້ເຮັດວຽກງານນີ້ຜ່ານຄວາມທຸກຍາກລຳບາກອັນແສນສາຫັດ; ແລະ ຈາກຄວາມຍາກຈົນຂອງພວກຂ້າພຣະອົງ, ພວກຂ້າພຣະອົງໄດ້ຖວາຍເຂົ້າຂອງ ຂອງພວກຂ້າພຣະອົງເພື່ອສ້າງ [ກ]ບ້ານແດ່ພຣະນາມຂອງພຣະອົງ, ເພື່ອວ່າບຸດມະນຸດຈະມີບ່ອນສະແດງພຣະອົງເອງໃຫ້ປະຈັກແກ່ຜູ້ຄົນຂອງພຣະອົງ.

6 ແລະ ດັ່ງທີ່ພຣະອົງໄດ້ກ່າວໄວ້ຢູ່ໃນ [ກ]ການເປີດເຜີຍ, ທີ່ໄດ້ປະທານໃຫ້ແກ່ພວກຂ້າພຣະອົງ, ເອີ້ນພວກຂ້າພຣະອົງວ່າເປັນເພື່ອນຂອງພຣະອົງ, ໂດຍກ່າວວ່າ—ຈົ່ງເອີ້ນໃຫ້ມີການຊຸມນຸມທີ່ສັກສິດ, ດັ່ງທີ່ເຮົາໄດ້ບັນຊາພວກເຈົ້າ;

7 ແລະ ເນື່ອງຈາກວ່າຄົນທັງປວງບໍ່ມີສັດທາ, ພວກເຈົ້າຈົ່ງສະແຫວງຫາຢ່າງພາກພຽນ ແລະ ສິດສອນຖ້ອຍຄຳແຫ່ງປັນຍາໃຫ້ກັນແລະກັນ; ແທ້ຈິງແລ້ວ, ພວກເຈົ້າຈົ່ງສະແຫວງຫາຖ້ອຍຄຳແຫ່ງປັນຍາຢູ່ໃນປຶ້ມທີ່ດີທີ່ສຸດ; ຈົ່ງສະແຫວງຫາການຮຽນຮູ້, ແມ່ນແຕ່ໂດຍການສຶກສາ ແລະ ໂດຍສັດທານຳອີກ;

8 ຈົ່ງວາງລະບຽບຕົນເອງ; ຕຽມສິ່ງທີ່ຈຳເປັນທຸກຢ່າງ; ແລະ ສະຖາປະນາບ້ານ, ແມ່ນແຕ່ບ້ານແຫ່ງການອະທິຖານ, ບ້ານແຫ່ງການຖືສິນອົດເຂົ້າ, ບ້ານແຫ່ງສັດທາ, ບ້ານແຫ່ງການຮຽນຮູ້, ບ້ານແຫ່ງລັດສະໝີພາບ, ບ້ານແຫ່ງລະບຽບ, ບ້ານຂອງພຣະເຈົ້າ;

9 ເພື່ອການເຂົ້າມາຂອງພວກເຈົ້າຈະເປັນໄປໃນພຣະນາມຂອງພຣະຜູ້ເປັນເຈົ້າ; ເພື່ອການອອກໄປຂອງພວກເຈົ້າຈະເປັນໄປໃນພຣະນາມຂອງພຣະຜູ້ເປັນເຈົ້າ; ເພື່ອການທັກທາຍທັງໝົດຂອງພວກເຈົ້າຈະເປັນໄປໃນພຣະນາມຂອງພຣະຜູ້ເປັນເຈົ້າ, ດ້ວຍມືທີ່ຍົກຂຶ້ນແດ່ພຣະຜູ້ສູງສຸດ—

10 ແລະ ບັດນີ້, ພຣະບິດາຜູ້ບໍລິສຸດ, ພວກຂ້າພຣະອົງທູນຂໍໃຫ້ພຣະອົງຊ່ວຍເຫລືອພວກຂ້າພຣະອົງ, ຜູ້ຄົນຂອງພຣະອົງ, ດ້ວຍພຣະຄຸນຂອງພຣະອົງ, ໃນການເອີ້ນໃຫ້ມີການຊຸມນຸມທີ່ສັກສິດຂອງພວກຂ້າພຣະອົງ, ເພື່ອວ່າມັນຈະເປັນໄປເພື່ອໃຫ້ກຽດແດ່ພຣະອົງ ແລະ ເພື່ອການຮັບຮອງອັນສູງສົ່ງຂອງພຣະອົງ;

11 ແລະ ໃນວິທີທີ່ພວກຂ້າພຣະອົງຈະຖືກພົບເຫັນວ່າມີຄຸນຄ່າ, ໃນສາຍພຣະເນດຂອງພຣະອົງ, ເພື່ອຈະໄດ້ສຳເລັດຜົນໃນ [ກ]ຄຳສັນຍາຊຶ່ງພຣະອົງໄດ້ກະທຳໄວ້ກັບພວກຂ້າພຣະອົງ, ຜູ້ຄົນຂອງພຣະອົງ, ໃນການເປີດເຜີຍທີ່ໄດ້ມອບໃຫ້ແກ່ພວກຂ້າພຣະອົງ;

12 ເພື່ອວ່າ [ກ]ລັດສະໝີພາບຂອງພຣະອົງຈະລົງມາສະຖິດຢູ່ເທິງຜູ້ຄົນຂອງພຣະອົງ, ແລະ ເທິງບ້ານຫລັງນີ້ຂອງພຣະອົງ, ຊຶ່ງພວກຂ້າພຣະອົງໄດ້ອຸທິດແດ່ພຣະອົງ, ເພື່ອວ່າມັນຈະໄດ້ຮັບການຊຳລະໃຫ້ບໍລິ

4 ກ 1 ກສ 9:3.
ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
ຂ 2 ນຟ 5:16.
5 ກ ຄພ 124:27–28.
6 ກ ຄພ 88:117–120.
11 ກ ຄພ 38:32; 105:11–12, 18, 33.
12 ກ ຄມພ ລັດສະໝີພາບ.

ສຸດ ແລະ ຖືກອຸທິດຖວາຍໃຫ້ສັກສິດ, ແລະ ເພື່ອວ່າການປະທັບຢູ່ທີ່ສັກສິດຂອງພຣະອົງຈະດຳເນີນຕໍ່ໄປໃນບ້ານຫລັງນີ້;

13 ແລະ ເພື່ອວ່າຜູ້ຄົນທັງປວງທີ່ຈະເຂົ້າສູ່ທາງເຂົ້າບ້ານຂອງພຣະຜູ້ເປັນເຈົ້າ ຈະຮູ້ສຶກເຖິງອຳນາດຂອງພຣະອົງ, ແລະ ຍອມຮັບຮູ້ວ່າ ພຣະອົງໄດ້ຊຳລະບ່ອນນີ້ໃຫ້ບໍລິສຸດ, ແລະ ວ່າມັນເປັນບ້ານຂອງພຣະອົງ, ເປັນສະຖານທີ່ສັກສິດຂອງພຣະອົງ.

14 ແລະ ຂໍໃຫ້ພຣະອົງຈົ່ງປະທານ, ພຣະບິດາຜູ້ບໍລິສຸດເອີຍ, ໃຫ້ທຸກຄົນຜູ້ທີ່ຈະນະມັດສະການໃນບ້ານຫລັງນີ້ໄດ້ຮັບການສິດສອນຖ້ອຍຄຳແຫ່ງປັນຍາຢູ່ໃນປຶ້ມທີ່ດີທີ່ສຸດ; ແລະ ໃຫ້ພວກເຂົາສະແຫວງຫາການຮຽນຮູ້, ແມ່ນແຕ່ໂດຍການສຶກສາ, ແລະ ໂດຍສັດທານຳອີກ, ດັ່ງທີ່ພຣະອົງໄດ້ກ່າວ;

15 ແລະ ໃຫ້ພວກເຂົາເຕີບໂຕຂຶ້ນໃນພຣະອົງ, ແລະ ໄດ້ຮັບຄວາມສົມບູນແຫ່ງພຣະວິນຍານບໍລິສຸດ, ແລະ ເປັນລະບຽບຕາມກົດຂອງພຣະອົງ, ແລະ ຕຽມພ້ອມທີ່ຈະຮັບສິ່ງຈຳເປັນທຸກຢ່າງ;

16 ແລະ ໃຫ້ບ້ານແຫ່ງນີ້ເປັນບ້ານແຫ່ງການອະທິຖານ, ບ້ານແຫ່ງການຖືສິນອົດເຂົ້າ, ບ້ານແຫ່ງສັດທາ, ບ້ານແຫ່ງລັດສະໝີພາບ ແລະ ຂອງພຣະເຈົ້າ, ແມ່ນແຕ່ບ້ານຂອງພຣະອົງ;

17 ໃຫ້ການເຂົ້າມາທັງໝົດຂອງຜູ້ຄົນຂອງພຣະອົງ, ສູ່ບ້ານແຫ່ງນີ້, ເປັນໄປໃນພຣະນາມຂອງພຣະຜູ້ເປັນເຈົ້າ;

18 ໃຫ້ການອອກໄປທັງໝົດຂອງເຂົາເຈົ້າຈາກບ້ານແຫ່ງນີ້ ເປັນໄປໃນພຣະນາມຂອງພຣະຜູ້ເປັນເຈົ້າ;

19 ແລະ ໃຫ້ການທັກທາຍທັງໝົດຂອງເຂົາເຈົ້າ ເປັນໄປໃນພຣະນາມຂອງພຣະຜູ້ເປັນເຈົ້າ, ດ້ວຍມືບໍລິສຸດ, ທີ່ຍົກຂຶ້ນແດ່ພຣະຜູ້ສູງສຸດ;

20 ແລະ ບໍ່ອະນຸຍາດໃຫ້ [ກ]ສິ່ງທີ່ບໍ່ສະອາດເຂົ້າມາໃນບ້ານຂອງພຣະອົງ ເພື່ອເຮັດໃຫ້ມັນເປິເປື້ອນ;

21 ແລະ ເມື່ອຜູ້ຄົນຂອງພຣະອົງລ່ວງລະເມີດ, ຄົນໜຶ່ງຄົນໃດກໍຕາມ ໃນພວກເຂົາ, ເຂົາເຈົ້າຈະກັບໃຈຢ່າງໄວ ແລະ ກັບຄືນມາຫາພຣະອົງ, ແລະ ພົບຄວາມໂປດປານໃນສາຍພຣະເນດຂອງພຣະອົງ, ແລະ ຖືກຮັບຄືນສູ່ພອນຊຶ່ງພຣະອົງໄດ້ແຕ່ງຕັ້ງໄວ້ໃຫ້ຖອກເທລົງມາເທິງຄົນເຫລົ່ານັ້ນ ທີ່ຈະນອບນ້ອມ [ກ]ຄາລະວະພຣະອົງຢູ່ໃນບ້ານຂອງພຣະອົງ.

22 ແລະ ພວກຂ້າພຣະອົງທູນຂໍພຣະອົງ, ພຣະບິດາຜູ້ບໍລິສຸດ, ໃຫ້ຜູ້ຮັບໃຊ້ຂອງພຣະອົງອອກໄປຈາກບ້ານແຫ່ງນີ້ໂດຍມີອຳນາດຂອງພຣະອົງເປັນອາວຸດ, ແລະ ໃຫ້ພຣະນາມຂອງພຣະອົງຢູ່ກັບເຂົາເຈົ້າ, ແລະ ໃຫ້ລັດສະໝີພາບຂອງພຣະອົງຢູ່ອ້ອມຮອບເຂົາເຈົ້າ, ແລະ [ກ]ເຫລົ່າທູດຂອງພຣະອົງຮັບຜິດຊອບດູແລເຂົາເຈົ້າ;

23 ແລະ ຈາກສະຖານທີ່ແຫ່ງນີ້ ເຂົາເຈົ້າຈະນຳຂ່າວສຳຄັນ ແລະ ປະເສີດ, ຕາມຄວາມຈິງ, ໄປຍັງ [ກ]ທີ່ສຸດຂອງແຜ່ນດິນໂລກ, ເພື່ອວ່າເຂົາເຈົ້າຈະໄດ້ຮູ້ວ່າ ນີ້ຄືວຽກງານຂອງພຣະອົງ, ແລະວ່າພຣະອົງຈະຍື່ນພຣະຫັດຂອງພຣະອົງອອກໄປ, ເພື່ອເຮັດໃຫ້ສິ່ງທີ່ພຣະອົງໄດ້ຮັບສັ່ງໄວ້ ໂດຍປາກຂອງສາດສະດາທັງຫລາຍກ່ຽວກັບຍຸກສຸດທ້າຍສຳເລັດຄົບຖ້ວນ.

24 ພວກຂ້າພຣະອົງທູນຂໍພຣະອົງ, ພຣະບິດາຜູ້ບໍລິສຸດ, ຈົ່ງໂປດສະຖາປະນາ

20 *ກ* ຄພ 94:8–9; 97:15–17.
21 *ກ* ຄມພ ຄາລະວະ, ຄວາມຄາລະວະ.
22 *ກ* ຄມພ ທູດ, ເທວະດາ.
23 *ກ* ຄພ 1:2.

ຜູ້ຄົນທີ່ຈະນະມັດສະການ, ແລະ ມີຊື່ສຽງ ແລະ ຖານະໃນບ້ານແຫ່ງນີ້ຂອງພຣະອົງ, ແກ່ທຸກລຸ້ນ ແລະ ຊົ່ວນິລັນດອນ;

25 ເພື່ອວ່າອາວຸດທີ່ຖືກ ᵃສ້າງຂຶ້ນຕໍ່ຕ້ານ ເຂົາເຈົ້າຈະບໍ່ຈະເລີນ; ເພື່ອວ່າຄົນທີ່ຂຸດ ᵇຫລຸມດັກເຂົາເຈົ້າຈະຕົກລົງໄປໃນຫລຸມ ນັ້ນເອງ;

26 ເພື່ອ ວ່າ ບໍ່ ມີ ການ ມົ້ວ ສຸມ ລັບ ແຫ່ງ ຄວາມ ຊົ່ວຮ້າຍ ໃດ ຈະມີອຳນາດ ເພື່ອລຸກ ຂຶ້ນ ແລະ ᵃຊະນະຜູ້ຄົນຂອງພຣະອົງ ຊຶ່ງ ຢູ່ເທິງຜູ້ຄົນເຫລົ່ານັ້ນ ທີ່ ᵇພຣະນາມຂອງ ພຣະອົງຈະຢູ່ນຳໃນບ້ານແຫ່ງນີ້;

27 ແລະ ຖ້າຫາກຜູ້ຄົນໃດຈະລຸກຂຶ້ນຕໍ່ ຕ້ານຜູ້ຄົນເຫລົ່ານີ້, ກໍໃຫ້ພຣະພິໂລດຂອງ ພຣະອົງຈົ່ງເກີດກັບພວກເຂົາ;

28 ແລະ ຖ້າຫາກພວກເຂົາຈະລົງໂທດຜູ້ ຄົນເຫລົ່ານີ້ ຂໍໃຫ້ພຣະອົງຈົ່ງລົງໂທດພວກ ເຂົາ; ຂໍໃຫ້ພຣະອົງຈົ່ງຕໍ່ສູ້ໃຫ້ຜູ້ຄົນຂອງ ພຣະອົງ ດັ່ງທີ່ພຣະອົງໄດ້ເຮັດໃນວັນແຫ່ງ ການສູ້ຮົບ, ເພື່ອວ່າເຂົາເຈົ້າຈະໄດ້ຖືກປົດ ປ່ອຍຈາກມືຂອງສັດຕູທັງປວງຂອງເຂົາ ເຈົ້າ.

29 ພວກ ຂ້າ ພຣະ ອົງ ທູນ ຂໍ ພຣະ ອົງ, ພຣະບິດາຜູ້ບໍລິສຸດ, ຈົ່ງເຮັດໃຫ້ທຸກຄົນທີ່ ແຜ່ຂ່າວເທັດໄປທົ່ວໂລກຕໍ່ຕ້ານຜູ້ຮັບໃຊ້ ຫລື ບັນດາຜູ້ຮັບໃຊ້ຂອງພຣະອົງ ຍອມ ຈຳນົນ, ແລະ ຕົກຕະລຶງ, ແລະ ຖືກນຳມາ ສູ່ຄວາມອັບອາຍ ແລະ ຄວາມສັບສົນ, ຖ້າ ຫາກພວກເຂົາບໍ່ກັບໃຈ, ເມື່ອພຣະກິດຕິ ຄຸນອັນເປັນນິດຈະຖືກປະກາດໃນຫູຂອງ ພວກເຂົາ;

30 ແລະ ໃຫ້ວຽກງານທັງໝົດຂອງພວກ ເຂົາບໍ່ມີປະໂຫຍດ, ແລະ ຖືກກວາດລ້າງ ໄປໂດຍລູກ ᵃໝາກເຫັບ, ແລະ ໂດຍການ ພິພາກສາ ຊຶ່ງພຣະອົງຈະສົ່ງມາຍັງພວກ ເຂົາໃນຄວາມພຣະພິໂລດຂອງພຣະອົງ, ເພື່ອຢຸດຕິ ᵇການເວົ້າຕົວະ ແລະ ການໃສ່ ຮ້າຍປ້າຍສີຜູ້ຄົນຂອງພຣະອົງ.

31 ເພາະ ພຣະ ອົງ ຮູ້, ໂອ້ ພຣະຜູ້ເປັນ ເຈົ້າ, ວ່າຜູ້ຮັບໃຊ້ຂອງພຣະອົງບໍລິສຸດຢູ່ ຕໍ່ພຣະພັກຂອງພຣະອົງ ໃນການກ່າວຄຳ ພະຍານເຖິງພຣະນາມຂອງພຣະອົງ, ຊຶ່ງ ເຂົາເຈົ້າໄດ້ຮັບທຸກທໍລະມານກັບສິ່ງເຫລົ່າ ນີ້.

32 ສະນັ້ນ ພວກຂ້າພຣະອົງທູນຂໍພຣະ ອົງ ຢູ່ຕໍ່ພຣະພັກຂອງພຣະອົງ ເພື່ອການ ປົດປ່ອຍອັນຄົບຖ້ວນ ແລະ ບໍລິບູນ ແລະ ຈາກພາຍໃຕ້ ᵃແອກນີ້;

33 ຈົ່ງຫັກມັນເຖີດ, ໂອ້ ພຣະຜູ້ເປັນເຈົ້າ; ຈົ່ງຫັກມັນອອກຈາກຄໍຂອງຜູ້ຮັບໃຊ້ຂອງ ພຣະອົງ, ໂດຍອຳນາດຂອງພຣະອົງ, ເພື່ອ ວ່າພວກຂ້າພຣະອົງຈະໄດ້ລຸກຂຶ້ນໃນທ່າມ ກາງຄົນລຸ້ນນີ້ ແລະ ເຮັດວຽກງານຂອງ ພຣະອົງ.

34 ໂອ້ ພຣະ ເຢ ໂຮ ວາ, ຈົ່ງ ມີ ຄວາມ ເມດຕາຕໍ່ຜູ້ຄົນເຫລົ່ານີ້, ແລະ ເນື່ອງຈາກ ມະນຸດທັງປວງເຮັດ ᵃບາບ, ຈົ່ງໃຫ້ອະໄພ ແກ່ການລ່ວງລະເມີດຂອງຜູ້ຄົນຂອງພຣະ ອົງ, ແລະ ໃຫ້ສິ່ງເຫລົ່ານັ້ນຖືກລົບລ້າງໄປ ຕະຫລອດການດ້ວຍເຖີດ.

35 ຂໍໃຫ້ ᵃການເຈີມຂອງຜູ້ປະຕິບັດສາດ ສະໜາກິດຂອງພຣະອົງ ຖືກຜະນຶກໄວ້ເທິງ ເຂົາເຈົ້າດ້ວຍອຳນາດຈາກເບື້ອງບົນ.

36 ຂໍໃຫ້ເກີດສຳເລັດຜົນກັບເຂົາເຈົ້າ,

25 *ກ* ອຊຢ 54:17.
*ຂ* ສພສ 26:27; 1 ນຟ 14:3; 22:14.
26 *ກ* ຄພ 98:22.
*ຂ* 1 ກສ 8:29.
30 *ກ* ອຊຢ 28:17; ມຊຢ 12:6; ຄພ 29:16.
*ຂ* 3 ນຟ 21:19–21.
32 *ກ* ຄມພ ແອກ.
34 *ກ* ຣມ 3:23; 5:12. ຄມພ ບາບ.
35 *ກ* ຄມພ ເຈີມ, ການເຈີມ.

ດັ່ງທີ່ໄດ້ເກີດກັບຄົນເຫລົ່ານັ້ນໃນວັນເພັນ
ເຕຄໍສະເຕ; ຂໍຈົ່ງຖອກເທຂອງປະທານ
ແຫ່ງ [ກ]ການເວົ້າພາສາລົງມາຍັງຜູ້ຄົນຂອງ
ພຣະອົງ, ແມ່ນແຕ່ມີລີ້ນເປັນ [ຂ]ຮູບເໝືອນ
ແປວໄຟ, ແລະ ການແປຄວາມໝາຍນັ້ນ.
37 ແລະ ຂໍໃຫ້ບ້ານຂອງພຣະອົງເຕັມ
ປ່ຽມ, ດັ່ງດ້ວຍລົມອັນມີພະລັງແຮງ, ດ້ວຍ
[ກ]ລັດສະໝີພາບຂອງພຣະອົງ.
38 ຂໍຈົ່ງສວມ [ກ]ປະຈັກພະຍານແຫ່ງ
ພັນທະສັນຍາ ໃຫ້ຜູ້ຮັບໃຊ້ຂອງພຣະອົງ,
ເພື່ອວ່າເມື່ອເຂົາເຈົ້າອອກໄປ ແລະ ປະ
ກາດພຣະຄຳຂອງພຣະອົງ ເຂົາເຈົ້າຈະ
[ຂ]ຜະນຶກກົດ, ແລະ ຕຽມໃຈຂອງໄພ່ພົນ
ຂອງພຣະອົງສຳລັບການພິພາກສາທັງ
ຫລາຍ ທີ່ພຣະອົງພວມຈະສົ່ງມາ, ໃນພຣະ
ພິໂລດຂອງພຣະອົງ, ເທິງຜູ້ອາໄສ ຂອງ
[ຄ]ແຜ່ນດິນໂລກ, ເພາະການລ່ວງລະເມີດ
ຂອງພວກເຂົາ, ເພື່ອວ່າຜູ້ຄົນຂອງພຣະ
ອົງຈະບໍ່ທໍ້ຖອຍໃຈໃນວັນແຫ່ງຄວາມຫຍຸ້ງ
ຍາກ.
39 ແລະ ເມືອງໃດກໍຕາມທີ່ຜູ້ຮັບໃຊ້
ຂອງພຣະອົງຈະເຂົ້າໄປ, ແລະ ຜູ້ຄົນຂອງ
ເມືອງນັ້ນຮັບເອົາປະຈັກພະຍານຂອງເຂົາ
ເຈົ້າ, ຂໍຈົ່ງໃຫ້ສັນຕິສຸກຂອງພຣະອົງ ແລະ
ຄວາມລອດຂອງພຣະອົງຢູ່ກັບເມືອງນັ້ນ;
ເພື່ອວ່າເຂົາເຈົ້າຈະໄດ້ເຕົ້າໂຮມຄົນຊອບ
ທຳອອກຈາກເມືອງນັ້ນ, ເພື່ອວ່າພວກເຂົາ
ຈະໄດ້ມາສູ່ [ກ]ຊີໂອນ, ຫລື ສູ່ສະເຕກຂອງ
ນາງ, ບ່ອນທີ່ໄດ້ກຳນົດໄວ້ຂອງພຣະອົງ,
ພ້ອມດ້ວຍເພງແຫ່ງຄວາມສຸກອັນເປັນນິດ;
40 ແລະ ຈົນກວ່າການນີ້ຈະສຳເລັດ, ຂໍ
ຢ່າໃຫ້ການພິພາກສາຂອງພຣະອົງຕົກລົງ
ມາສູ່ເມືອງນັ້ນ.
41 ແລະ ເມືອງໃດກໍຕາມທີ່ຜູ້ຮັບໃຊ້ຂອງ
ພຣະອົງຈະເຂົ້າໄປ, ແລະ ຜູ້ຄົນຂອງເມືອງ
ນັ້ນບໍ່ໄດ້ຮັບເອົາປະຈັກພະຍານຂອງຜູ້ຮັບ
ໃຊ້ຂອງພຣະອົງ, ແລະ ຜູ້ຮັບໃຊ້ຂອງພຣະ
ອົງໄດ້ເຕືອນພວກເຂົາໃຫ້ຊ່ວຍຕົນເອງ ໃຫ້
ລອດຈາກຄົນລຸ້ນທີ່ຊົ່ວຮ້າຍນີ້, ຂໍໃຫ້ເກີດ
ກັບເມືອງນັ້ນດັ່ງທີ່ພຣະອົງໄດ້ຮັບສັ່ງໂດຍ
ປາກຂອງສາດສະດາຂອງພຣະອົງ.
42 ແຕ່ຂໍພຣະອົງຈົ່ງປົດປ່ອຍ, ໂອ້ ພຣະ
ເຢໂຮວາ, ພວກຂ້າພຣະອົງທູນຂໍພຣະອົງ,
ຜູ້ຮັບໃຊ້ຂອງພຣະອົງຈາກມືຂອງພວກ
ເຂົາ, ແລະ ຊຳລະເຂົາເຈົ້າຈາກເລືອດຂອງ
ພວກເຂົາ.
43 ໂອ້ ພຣະຜູ້ເປັນເຈົ້າ, ພວກຂ້າພຣະ
ອົງ ບໍ່ ເບີກບານ ໃນ ຄວາມ ພິນາດ ຂອງ
ເພື່ອນ ມະນຸດ ຂອງ ພວກ ຂ້າ ພຣະ ອົງ;
[ກ]ຈິດວິນຍານຂອງພວກເຂົາແມ່ນລ້ຳຄ່າຕໍ່
ພຣະອົງ;
44 ແຕ່ ພຣະ ຄຳ ຂອງ ພຣະ ອົງ ຕ້ອງ ສຳ
ເລັດຄົບຖ້ວນ. ຂໍຈົ່ງຊ່ວຍເຫລືອຜູ້ຮັບໃຊ້
ຂອງພຣະອົງທີ່ຈະກ່າວ, ດ້ວຍ [ກ]ພຣະຄຸນ
ຂອງພຣະອົງຊ່ວຍເຂົາເຈົ້າກ່າວວ່າ: ຂໍ
ໃຫ້ເປັນໄປຕາມພຣະປະສົງຂອງພຣະອົງ
ເທີ້ນ, ໂອ້ ພຣະຜູ້ເປັນເຈົ້າ, ແລະ ບໍ່ແມ່ນ
ຂອງພວກຂ້າພຣະອົງ.
45 ພວກຂ້າພຣະອົງຮູ້ວ່າ ພຣະອົງໄດ້
ຮັບສັ່ງໂດຍປາກຂອງສາດສະດາຂອງ
ພຣະອົງເຖິງສິ່ງທີ່ໜ້າຢ້ານກົວ ກ່ຽວກັບ
ຄົນຊົ່ວໃນ [ກ]ຍຸກສຸດທ້າຍ—ວ່າພຣະອົງຈະ

36 ກ ຄມພ ການເວົ້າພາສາ, ຂອງປະທານແຫ່ງ.
ຂ ກຈກ 2:1–3.
37 ກ ຄພ 84:5; 109:12. ຄມພ ລັດສະໝີພາບ.
38 ກ ຄມພ ປະຈັກພະຍານ.
ຂ ອຊຢ 8:16; ຄພ 1:8.
ຄ ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
39 ກ ອຊຢ 35:10.
43 ກ ຄມພ ຈິດວິນຍານ.
44 ກ ຄມພ ພຣະຄຸນ.
45 ກ ຄມພ ຍຸກສຸດທ້າຍ.

ຖອກເທການພິພາກສາ ຂອງພຣະອົງລົງ
ມາຈົນເກີນກວ່າທີ່ຈະວັດແທກໄດ້;
46 ສະນັ້ນ, ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງ
ປົດປ່ອຍຜູ້ຄົນຂອງພຣະອົງຈາກຄວາມ
ເສຍຫາຍຂອງຄົນຊົ່ວ; ຂໍຈົ່ງເຮັດໃຫ້ຜູ້ຮັບ
ໃຊ້ຂອງພຣະອົງສາມາດຜະນຶກກົດ, ແລະ
ຜູກມັດປະຈັກພະຍານ, ເພື່ອວ່າເຂົາເຈົ້າ
ຈະພ້ອມແລ້ວທີ່ຈະຕ້ານທານກັບວັນແຫ່ງ
ການເຜົາໄໝ້.
47 ພວກ ຂ້າ ພຣະ ອົງ ທູນ ຂໍ ພຣະ ອົງ,
ພຣະບິດາຜູ້ບໍລິສຸດ, ຈົ່ງນຶກເຖິງຄົນເຫລົ່າ
ນັ້ນທີ່ໄດ້ຖືກຜູ້ອາໄສຂອງເຂດແຈັກສັນ,
ລັດມິເຊີຣີ, ຂັບໄລ່ໜີຈາກແຜ່ນດິນທີ່ເປັນ
ມູນມໍລະດົກຂອງເຂົາເຈົ້າ, ແລະ ຈົ່ງຫັກ,
ໂອ້ ພຣະຜູ້ເປັນເຈົ້າ, ແອກແຫ່ງຄວາມທຸກ
ຍາກລຳບາກນີ້ ຊຶ່ງວາງຢູ່ເທິງເຂົາເຈົ້າ.
48 ພຣະອົງຮູ້ແລ້ວ, ໂອ້ ພຣະຜູ້ເປັນເຈົ້າ,
ວ່າເຂົາເຈົ້າໄດ້ຖືກຄົນຊົ່ວກົດຂີ່ຂົ່ມເຫັງ
ແລະ ເຮັດໃຫ້ເປັນທຸກຫລາຍ; ແລະ ຫົວ
ໃຈຂອງພວກຂ້າພຣະອົງ [ກ]ເຕັມໄປດ້ວຍ
ຄວາມໂສກເສົ້າ ເນື່ອງດ້ວຍພາລະອັນ
ແສນສາຫັດຂອງເຂົາເຈົ້າ.
49 ໂອ້ ພຣະຜູ້ເປັນເຈົ້າ, ດົນນານ [ກ]ປານ
ໃດທີ່ພຣະອົງຈະຍອມໃຫ້ຜູ້ຄົນເຫລົ່ານີ້
ແບກຫາບຄວາມທຸກນີ້, ແລະ ສຽງຮ້ອງ
ຈາກຄົນບໍລິສຸດຂອງເຂົາເຈົ້າໄດ້ຂຶ້ນເຖິງ
ພຣະກັນ ຂອງພຣະອົງ, ແລະ [ຂ]ເລືອດ
ຂອງເຂົາເຈົ້າຂຶ້ນໄປເປັນປະຈັກພະຍານຕໍ່
ພຣະພັກຂອງພຣະອົງ, ແລະ ຈະບໍ່ສະແດງ
ປະຈັກພະຍານຂອງພຣະອົງເພື່ອຊ່ວຍ
ເຫລືອເຂົາເຈົ້າບໍ?
50 ຂໍຈົ່ງມີ[ກ]ເມດຕາ, ໂອ້ພຣະຜູ້ເປັນເຈົ້າ,
ຕໍ່ກຸ່ມອັນຕະພານທີ່ຊົ່ວຮ້າຍ, ຜູ້ໄດ້ຂັບໄລ່
ຜູ້ຄົນຂອງພຣະອົງ, ເພື່ອວ່າພວກເຂົາຈະ
ເຊົາປຸ້ນ, ເພື່ອວ່າພວກເຂົາຈະກັບໃຈຈາກ
ບາບຂອງພວກເຂົາ ຖ້າຫາກການກັບໃຈ
ຈະເປັນໄປໄດ້ສຳລັບພວກເຂົາ;
51 ແຕ່ຖ້າຫາກພວກເຂົາບໍ່ເຮັດ, ຂໍຈົ່ງອ້າ
ແຂນຂອງພຣະອົງ, ໂອ້ ພຣະຜູ້ເປັນເຈົ້າ,
ແລະ [ກ]ໄຖ່ສິ່ງນັ້ນທີ່ພຣະອົງໄດ້ກຳນົດໄວ້
ເປັນຊີໂອນສຳລັບຜູ້ຄົນຂອງພຣະອົງ.
52 ແລະ ຖ້າຫາກມັນເປັນຢ່າງອື່ນບໍ່ໄດ້,
ເພື່ອອຸດົມການຂອງຜູ້ຄົນຂອງພຣະອົງຈະ
ບໍ່ລົ້ມເຫລວຢູ່ຕໍ່ພຣະພັກຂອງພຣະອົງ ກໍຂໍ
ໃຫ້ພຣະພິໂລດຂອງພຣະອົງເກີດກັບພວກ
ເຂົາ, ແລະ ຄວາມເຄືອງແຄ້ນຂອງພຣະອົງ
ຈົ່ງຕົກລົງໃສ່ເທິງພວກເຂົາ, ເພື່ອວ່າພວກ
ເຂົາຈະເສື່ອມໂຊມລົງ, ທັງຮາກ ແລະ ກິ່ງ
ງ່າ, ຈາກພາຍໃຕ້ຟ້າສະຫວັນ;
53 ແຕ່ຕາບໃດທີ່ພວກເຂົາຈະກັບໃຈ, ຂໍ
ພຣະອົງຈົ່ງປານີ ແລະ ເມດຕາ, ແລະ ຂໍຈົ່ງ
ຫັນເອົາພຣະພິໂລດຂອງພຣະອົງໄປ ເມື່ອ
ພຣະອົງທອດພຣະເນດເບິ່ງພຣະພັກ ຂອງ
ພຣະຜູ້ທີ່ຖືກເຈີມໄວ້ຂອງພຣະອົງ.
54 ຂໍຈົ່ງມີເມດຕາ, ໂອ້ ພຣະອົງເຈົ້າເອີຍ,
ຕໍ່ປະຊາຊາດທັງປວງຂອງແຜ່ນດິນໂລກ;
ຂໍຈົ່ງມີເມດຕາຕໍ່ຜູ້ປົກຄອງແຜ່ນດິນຂອງ
ພວກຂ້າພຣະອົງ; ຂໍໃຫ້ຫລັກທຳເຫລົ່ານັ້ນ,
ຊຶ່ງໄດ້ຮັບການປົກປ້ອງຢ່າງສົມກຽດ ແລະ
ສະຫງ່າງາມ, ນັ້ນຄື, [ກ]ລັດຖະທຳມະນູນ
ຂອງແຜ່ນດິນຂອງພວກຂ້າພຣະອົງ, ໂດຍ
ບັນພະບຸລຸດຂອງພວກຂ້າພຣະອົງ, ໄດ້ຮັບ
ການສະຖາປະນາໄວ້ຕະຫລອດການ.
55 ຂໍຈົ່ງລະນຶກເຖິງບັນດາກະສັດ, ເຈົ້າ

48*ກ* ຄມພ ເມດຕາສົງສານ,
ຄວາມເມດຕາສົງສານ.
49*ກ* ພສສ 13:1–2.
*ຂ* ຄມພ ຕາຍເພາະ
ຄວາມເຊື່ອ, ການຕາຍ
ເພາະຄວາມເຊື່ອ.
50*ກ* ຄມພ ເມດຕາ, ມີເມດ
ຕາ, ຄວາມເມດຕາ.
51*ກ* ຄພ 100:13; 105:2.
54*ກ* 1 ປຕ 2:13–15;
ຄພ 98:5–7; 101:77, 80.
ຄມພ ລັດຖະທຳມະນູນ.

ຊາຍ, ຜູ້ສູງສັກ, ແລະ ບຸລຸດທີ່ຍິ່ງໃຫຍ່ທັງ
ຫລາຍຂອງແຜ່ນດິນໂລກ, ແລະ ຜູ້ຄົນທັງ
ປວງ, ແລະ ສາດສະໜາຈັກຕ່າງໆ, ຄົນ
ຍາກຈົນ, ຄົນຂັດສົນ, ແລະ ຄົນທີ່ເປັນທຸກ
ທັງປວງ ຂອງແຜ່ນດິນໂລກ;
56 ເພື່ອວ່າຫົວ ໃຈ ຂອງ ພວກ ເຂົາ ຈະ
ອ່ອນລົງ ເມື່ອຜູ້ຮັບ ໃຊ້ຂອງພຣະອົງຈະ
ອອກໄປຈາກບ້ານຂອງພຣະອົງ, ໂອ້ ພຣະ
ເຢໂຮວາ, ເພື່ອສະແດງປະຈັກພະຍານເຖິງ
ພຣະນາມຂອງພຣະອົງ; ເພື່ອວ່າອະຄະຕິ
ຂອງພວກເຂົາຈະເປີດທາງໃຫ້ [ກ]ຄວາມຈິງ,
ແລະ ຜູ້ຄົນຂອງພຣະອົງຈະໄດ້ຮັບຄວາມ
ໂປດປານໃນສາຍຕາຂອງຜູ້ຄົນທັງປວງ;
57 ເພື່ອວ່າທີ່ສຸດທັງໝົດຂອງແຜ່ນດິນ
ໂລກ ຈະຮູ້ວ່າພວກຂ້າພຣະອົງ, ຜູ້ຮັບໃຊ້
ຂອງພຣະອົງ, [ກ]ໄດ້ຍິນສຸລະສຽງຂອງພຣະ
ອົງ, ແລະ ວ່າພຣະອົງໄດ້ສົ່ງພວກຂ້າພຣະ
ອົງມາ;
58 ເພື່ອ ວ່າ ຈາກ ບັນ ດາ ຄົນ ທັງ ຫລາຍ
ເຫລົ່ານີ້, ຜູ້ຮັບໃຊ້ຂອງພຣະອົງ, ບັນດາ
ບຸດຂອງຢາໂຄບ, ຈະເຕົ້າໂຮມຄົນຊອບ
ທຳອອກມາ ເພື່ອສ້າງນະຄອນສັກສິດແດ່
ພຣະນາມຂອງພຣະອົງ, ດັ່ງທີ່ພຣະອົງໄດ້
ບັນຊາພວກເຂົາ.
59 ພວກຂ້າພຣະອົງທູນຂໍພຣະອົງ ຈົ່ງ
ໂປດກຳນົດ [ກ]ສະເຕກອື່ນໆໄວ້ໃຫ້ຊີໂອນທີ່
ນອກເໜືອໄປຈາກສະເຕກແຫ່ງນີ້ ຊຶ່ງພຣະ
ອົງໄດ້ກຳນົດໄວ້, ເພື່ອວ່າ [ຂ]ການເຕົ້າໂຮມ
ຂອງຜູ້ຄົນຂອງພຣະອົງຈະດຳເນີນໄປໃນ
ອຳນາດ ແລະ ເດຊານຸພາບອັນຍິ່ງໃຫຍ່,
ເພື່ອວ່າວຽກງານຂອງພຣະອົງ ຈະຖືກຕັດ
ໃຫ້ [ຄ]ສັ້ນລົງໃນຄວາມຊອບທຳ.
60 ບັດນີ້ ຖ້ອຍຄຳເຫລົ່ານີ້, ໂອ້ ພຣະຜູ້
ເປັນເຈົ້າ, ພວກຂ້າພຣະອົງໄດ້ທູນຢູ່ຕໍ່ພຣະ
ພັກຂອງພຣະອົງ, ກ່ຽວກັບການເປີດເຜີຍ
ແລະ ພຣະບັນຍັດ ຊຶ່ງພຣະອົງໄດ້ປະທານ
ໃຫ້ແກ່ພວກຂ້າພຣະອົງ, ຜູ້ທີ່ຖືກລະບຸໄວ້
ກັບ [ກ]ຄົນຕ່າງຊາດ.
61 ແຕ່ ພຣະອົງຮູ້ແລ້ວວ່າ ພຣະອົງມີ
ຄວາມຮັກທີ່ຍິ່ງໃຫຍ່ສຳລັບລູກຫລານຂອງ
ຢາໂຄບ, ຜູ້ໄດ້ກະຈັດກະຈາຍໄປຢູ່ຕາມພູ
ເຂົາເປັນເວລາດົນນານ, ໃນວັນທີ່ເມກບົດ
ບັງ ແລະ ມືດມົນ.
62 ສະນັ້ນ ພວກ ຂ້າ ພຣະ ອົງ ຈຶ່ງ ທູນ ຂໍ
ພຣະອົງ ຂໍຈົ່ງມີເມດຕາຕໍ່ລູກຫລານຂອງ
ຢາໂຄບ, ເພື່ອວ່າ [ກ]ເຢຣູຊາເລັມ, ຈາກຊົ່ວ
ໂມງນີ້ໄປ, ຈະເລີ່ມໄດ້ຮັບການໄຖ່;
63 ແລະ ແອກແຫ່ງຄວາມເປັນທາດຈະ
ເລີ່ມຫັກອອກຈາກເຊື້ອສາຍຂອງ [ກ]ດາວິດ;
64 ແລະ ລູກຫລານຂອງ [ກ]ຢູດາ ຈະ
ເລີ່ມກັບໄປຍັງ [ຂ]ແຜ່ນດິນ ຊຶ່ງພຣະອົງໄດ້
ປະທານໃຫ້ແກ່ອັບຣາຮາມ, ບິດາຂອງ
ພວກເຂົາ.
65 ແລະ ເຮັດ ໃຫ້ [ກ]ຜູ້ ທີ່ ເຫລືອ ຢູ່ ຂອງ
ຢາໂຄບ, ຜູ້ທີ່ໄດ້ຖືກສາບແຊ່ງ ແລະ ຊົງ
ຕີເພາະການລ່ວງລະເມີດຂອງພວກເຂົາ,
[ຂ]ປ່ຽນໃຈເຫລື້ອມໃສຈາກສະພາບອັນຮ້າຍ
ກາດ ແລະ ປ່າເຖື່ອນຂອງພວກເຂົາມາສູ່

56 *ກ* ຄມພ ຈິງ, ຄວາມຈິງ.
57 *ກ* ຄພ 20:16; 76:22–24.
59 *ກ* ອຊຢ 54:2.
*ຂ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຄ* ມທ 24:22.
60 *ກ* 1 ນຟ 13:1–32; 15:13–18.
62 *ກ* 3 ນຟ 20:29. ຄມພ ເຢຣູຊາເລັມ.
63 *ກ* ຄມພ ດາວິດ.
64 *ກ* ຊກຢ 12:6–9; ມລກ 3:4; ຄພ 133:13, 35. ຄມພ ຢູດາ (ລູກຊາຍຂອງຢາໂຄບ).
*ຂ* ປຖກ 17:1–8. ຄມພ ແຜ່ນດິນແຫ່ງຄຳສັນຍາ.
65 *ກ* 2 ນຟ 30:3; ແອວ 46:23–24; 3 ນຟ 20:15–21; ຄພ 19:27.
*ຂ* 2 ນຟ 30:6; 3 ນຟ 21:20–22. ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.

ຄວາມສົມບູນຂອງພຣະກິດຕິຄຸນອັນເປັນນິດ;

66 ເພື່ອ ວ່າ ພວກ ເຂົາ ຈະ ວາງ ອາ ວຸດ ແຫ່ງການນອງເລືອດຂອງພວກເຂົາ, ແລະ ຢຸດຕິການກະບົດຂອງພວກເຂົາ.

67 ແລະ ຂໍໃຫ້ຜູ້ທີ່ເຫລືອຢູ່ທັງໝົດ ຂອງ [ກ]ອິດສະຣາເອນ ທີ່ກະຈັດກະຈາຍໄປ, ຜູ້ທີ່ຖືກຂັບໄລ່ໄປສູ່ທີ່ສຸດຂອງແຜ່ນດິນໂລກ, ມາສູ່ຄວາມ ຮູ້ ເລື່ອງ ຄວາມ ຈິງ, ເຊື່ອໃນພຣະເມຊີອາ, ແລະ ຖືກໄຖ່ຈາກການກົດຂີ່ຂົ່ມເຫັງ, ແລະ ປິຕິຍິນດີຢູ່ຕໍ່ພຣະພັກຂອງພຣະອົງ.

68 ໂອ້ ພຣະ ອົງ ເຈົ້າ ເອີຍ, ຂໍ ຈົ່ງ ລະນຶກ ເຖິງ ຜູ້ຮັບ ໃຊ້ຂອງພຣະອົງ, ໂຈເຊັບ ສະມິດ, ຜູ້ລູກ, ແລະ ຄວາມທຸກທໍລະມານ ແລະ ການຖືກຂົ່ມເຫັງທັງໝົດຂອງລາວ—ລາວໄດ້ເຮັດ [ກ]ພັນທະສັນຍາແນວໃດກັບ [ຂ]ພຣະເຢໂຮວາ, ແລະ ໄດ້ປະຕິຍານຕໍ່ພຣະອົງ, ໂອ້ ພຣະເຈົ້າອົງຍິ່ງໃຫຍ່ຂອງຢາໂຄບ—ແລະ ພຣະບັນຍັດ ຊຶ່ງພຣະອົງໄດ້ປະທານໃຫ້ແກ່ລາວ, ແລະ ທີ່ລາວໄດ້ພະຍາຍາມຢ່າງຈິງໃຈທີ່ຈະເຮັດຕາມພຣະປະສົງຂອງພຣະອົງ.

69 ຂໍຈົ່ງມີເມດຕາ, ໂອ້ ພຣະຜູ້ເປັນເຈົ້າ, ຕໍ່ພັນລະຍາ ແລະ ລູກໆຂອງລາວ, ເພື່ອວ່າພວກເຂົາຈະໄດ້ສູງສົ່ງຢູ່ໃນທີ່ປະທັບຂອງພຣະອົງ, ແລະ ໄດ້ຮັບການປົກປັກຮັກສາ ໂດຍພຣະຫັດທີ່ທະນຸຖະໜອມຂອງພຣະອົງ.

70 ຂໍຈົ່ງມີເມດຕາຕໍ່ຍາດຕິພີ່ນ້ອງ ທີ່ໃກ້ຊິດທັງໝົດຂອງພວກເຂົາ, ເພື່ອວ່າອະຄະຕິຂອງພວກເຂົາຈະຖືກທຳລາຍ ແລະ ຖືກກວາດລ້າງໄປດັ່ງດ້ວຍນ້ຳຖ້ວມ; ເພື່ອວ່າພວກເຂົາຈະໄດ້ປ່ຽນໃຈເຫລື້ອມໃສ ແລະ ໄດ້ຮັບການໄຖ່ພ້ອມກັບອິດສະຣາເອນ, ແລະ ຮູ້ວ່າພຣະອົງເປັນພຣະເຈົ້າ.

71 ຂໍຈົ່ງລະນຶກເຖິງ, ໂອ້ ພຣະຜູ້ເປັນເຈົ້າ, ປະທານທັງຫລາຍ, ແມ່ນແຕ່ປະທານທັງຫລາຍຂອງສາດສະໜາຈັກຂອງພຣະອົງ, ເພື່ອວ່າພຣະຫັດຂວາຂອງພຣະອົງ ຈະເຮັດໃຫ້ພວກເພິ່ນສູງສົ່ງ, ພ້ອມກັບຄອບຄົວທັງຫລາຍຂອງພວກເພິ່ນ, ແລະ ຍາດຕິພີ່ນ້ອງທີ່ໃກ້ຊິດຂອງພວກເພິ່ນນຳອີກ, ເພື່ອວ່າຊື່ຂອງພວກເພິ່ນຈະຖືກຈື່ຈຳ ແລະ ຢູ່ໃນຄວາມຊົງຈຳອັນເປັນນິດຈາກລຸ້ນສູ່ລຸ້ນ.

72 ຂໍຈົ່ງລະນຶກເຖິງສາດສະໜາຈັກທັງປວງຂອງພຣະອົງ, ໂອ້ ພຣະຜູ້ເປັນເຈົ້າ, ພ້ອມກັບຄອບຄົວທັງປວງຂອງເຂົາເຈົ້າ, ແລະ ຍາດຕິພີ່ນ້ອງທີ່ໃກ້ຊິດຂອງເຂົາເຈົ້າ, ພ້ອມກັບຄົນປ່ວຍໄຂ ແລະ ຄົນເປັນທຸກທັງປວງຂອງເຂົາເຈົ້າ, ພ້ອມກັບຄົນຍາກຈົນ ແລະ ອ່ອນໂຍນທັງປວງຂອງແຜ່ນດິນໂລກ; ເພື່ອວ່າ [ກ]ອານາຈັກ, ຊຶ່ງພຣະອົງໄດ້ຈັດຕັ້ງໄວ້ໂດຍບໍ່ໄດ້ໃຊ້ມື, ຈະກາຍເປັນພູເຂົາໃຫຍ່ ແລະ ເຕັມທັງແຜ່ນດິນໂລກ;

73 ເພື່ອວ່າສາດສະໜາຈັກຂອງພຣະອົງ ຈະອອກມາຈາກຖິ່ນແຫ້ງແລ້ງກັນດານແຫ່ງຄວາມມືດ, ແລະ ສ່ອງແສງງົດງາມດັ່ງ [ກ]ດວງເດືອນ, ແຈ່ມແຈ້ງດັ່ງດວງຕາເວັນ, ແລະ ເປັນໜ້າຢ້ານກົວດັ່ງກອງທັບມາພ້ອມກັບທຸງ;

74 ແລະ ຮັບການຕົກແຕ່ງດັ່ງເຈົ້າສາວສຳລັບວັນນັ້ນ ເມື່ອພຣະອົງຈະເປີດຟ້າສະຫວັນ, ແລະ ເຮັດໃຫ້ພູເຂົາ [ກ]ໄຫລລົງ

67 *ກ* ຄນພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
68 *ກ* ຄນພ ພັນທະສັນຍາ.
*ຂ* ຄນພ ເຢໂຮວາ.
72 *ກ* ດນອ 2:44–45; ຄພ 65:2.
73 *ກ* ຍພ 6:10; ຄພ 5:14; 105:31.
74 *ກ* ຄພ 133:21–22, 40.

ໄປ ເນື່ອງດ້ວຍການປະທັບຢູ່ຂອງພຣະອົງ, ແລະ [ຂ]ຫຸບເຂົາ ຈະ ຖືກ ຍົກ ຂຶ້ນສູງ, ບ່ອນ ຫລຸບໂນນ ຈະຖືກເຮັດໃຫ້ຮາບພຽງ; ເພື່ອ ວ່າລັດສະໝີພາບຂອງພຣະອົງຈະເຕັມ ແຜ່ນດິນໂລກ;

75 ເພື່ອ ວ່າ ເມື່ອ ເວລາ ສຽງ ແກ ດັງ ຂຶ້ນ ເພື່ອເອີ້ນຄົນຕາຍ, ພວກຂ້າພຣະອົງ ຈະ ຖືກ [ກ]ຮັບຂຶ້ນໄປໃນເມກເພື່ອພົບພຣະອົງ, ເພື່ອວ່າພວກຂ້າພຣະອົງຈະໄດ້ຢູ່ກັບພຣະ ຜູ້ເປັນເຈົ້າຕະຫລອດໄປ;

76 ເພື່ອ ວ່າອາພອນຂອງພວກຂ້າພຣະ ອົງຈະບໍລິສຸດ, ເພື່ອວ່າພວກຂ້າພຣະອົງ ຈະຖືກຫຸ້ມຫໍ່ດ້ວຍ [ກ]ເສື້ອຄຸມແຫ່ງຄວາມ ຊອບທຳ, ດ້ວຍກ້ານຕານຢູ່ໃນມືຂອງພວກ ຂ້າພຣະອົງ, ແລະ ໄດ້ຮັບ [ຂ]ມົງກຸດແຫ່ງລັດ ສະໝີພາບ ຢູ່ເທິງຫົວຂອງພວກຂ້າພຣະ ອົງ, ແລະ ເກັບກ່ຽວ [ຄ]ຄວາມຊື່ນຊົມນິລັນ ດອນ ແທນ [ງ]ຄວາມທຸກທໍລະມານທັງປວງ ຂອງພວກຂ້າພຣະອົງ.

77 ໂອ້ ອົງພຣະຜູ້ເປັນເຈົ້າຜູ້ຊົງລິດ ອຳນາດຍິ່ງໃຫຍ່, ຂໍຈົ່ງຟັງພວກຂ້າພຣະ ອົງໃນຄຳວິງວອນເຫລົ່ານີ້ຂອງພວກຂ້າ ພຣະອົງ, ແລະ ຕອບພວກຂ້າພຣະອົງຈາກ ສະຫວັນ, ທີ່ປະທັບອັນສັກສິດຂອງພຣະ ອົງ, ບ່ອນທີ່ພຣະອົງປະທັບຢູ່ເທິງພຣະບັນ ລັງ, ດ້ວຍ [ກ]ລັດສະໝີພາບ, ກຽດຕິຍົດ, ອຳນາດ, ເດຊານຸພາບ, ຄວາມຍິ່ງໃຫຍ່, ການຄອບຄອງ, ຄວາມຈິງ, ຄວາມຍຸດຕິ ທຳ, ການພິພາກສາ, ຄວາມເມດຕາ, ແລະ ຄວາມສົມບູນອັນບໍ່ມີທີ່ສິ້ນສຸດ, ຈາກເປັນ ນິດເຖິງເປັນນິດ.

78 ໂອ້ ຂໍຈົ່ງຟັງ, ໂອ້ ຂໍຈົ່ງຟັງ, ໂອ້ ຂໍຈົ່ງ ຟັງພວກຂ້າພຣະອົງ, ໂອ້ ພຣະຜູ້ເປັນເຈົ້າ! ແລະ ຂໍຈົ່ງຕອບຄຳອ້ອນວອນເຫລົ່ານີ້, ແລະ ຂໍຈົ່ງຮັບເອົາການອຸທິດຖວາຍບ້ານ ແຫ່ງນີ້ແດ່ພຣະອົງ, ວຽກງານຈາກມືຂອງ ພວກຂ້າພຣະອົງ, ຊຶ່ງພວກຂ້າພຣະອົງໄດ້ ສ້າງແດ່ພຣະນາມຂອງພຣະອົງ;

79 ແລະ ສາດສະໜາຈັກນີ້ນຳອີກ, ເພື່ອ ໃສ່ພຣະນາມຂອງພຣະອົງໄວ້ເທິງນັ້ນ. ແລະ ຂໍຈົ່ງຊ່ວຍເຫລືອພວກຂ້າພຣະອົງ ໂດຍອຳນາດຂອງພຣະວິນຍານຂອງພຣະ ອົງ, ເພື່ອວ່າພວກຂ້າພຣະອົງຈະໄດ້ປະ ສານສຽງຂອງພວກຂ້າພຣະອົງ ຮ່ວມກັບ [ກ]ເຊຣາຟິມເຫລົ່ານັ້ນທີ່ຮຸ່ງແຈ້ງ ແລະ ສ່ອງ ແສງຢູ່ອ້ອມຮອບພຣະບັນລັງຂອງພຣະ ອົງ, ພ້ອມດ້ວຍການໂຮຮ້ອງສັນລະເສີນ, ຮ້ອງໂຮຊັນນາແດ່ພຣະເຈົ້າ ແລະ [ຂ]ພຣະ ເມສານ້ອຍ!

80 ແລະ ຂໍຈົ່ງໃຫ້ຜູ້ຄົນເຫລົ່ານັ້ນ, ຜູ້ທີ່ ຖືກເຈີມໄວ້ຂອງພຣະອົງ, ໄດ້ຖືກ [ກ]ຫຸ້ມ ຫໍ່ດ້ວຍຄວາມລອດ, ແລະ ໄພ່ພົນຂອງ ພຣະອົງຮ້ອງສະໜັ່ນດ້ວຍຄວາມຊື່ນຊົມ. ອາແມນ, ແລະ ອາແມນ.

# ພາກທີ 110

*ພາບນິມິດທີ່ສະແດງໃຫ້ປະຈັກແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ອໍລີເວີ ຄາວ*

74 *ຂ* ອຊຢ 40:4; ລກ 3:5; ຄພ 49:23.
75 *ກ* 1 ທສນ 4:17.
76 *ກ* ພນມ 7:13–15; 2 ນຟ 9:14.
*ຂ* ຄນພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
*ຄ* ຄນພ ຊື່ນຊົມ, ຄວາມຊື່ນຊົມ.
*ງ* ຮຣ 12:1–11; ຄພ 58:4.
77 *ກ* ຄນພ ລັດສະໝີພາບ.
79 *ກ* ອຊຢ 6:1–2.
*ຂ* ຄນພ ພຣະເມສານ້ອຍ ຂອງພຣະເຈົ້າ.
80 *ກ* ພສສ 132:16.

*ເດີຣີ ໃນພຣະວິຫານ ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 3 ເດືອນເມສາ 1836. ເຫດການນັ້ນເປັນການປະຊຸມໃນວັນຊະບາໂຕ. ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ: "ໃນຕອນບ່າຍ, ຂ້າພະເຈົ້າໄດ້ຊ່ວຍປະທານຄົນອື່ນໆໃນການມອບອາຫານຄ່ຳຂອງພຣະຜູ້ເປັນເຈົ້າແກ່ ສາດສະໜາຈັກ, ໂດຍຮັບມັນມາຈາກອັກຄະສາວົກສິບສອງ, ຊຶ່ງເປັນສິດທິພິເສດຂອງຜູ້ຄົນເຫລົ່ານັ້ນທີ່ຈະປະຕິບັດໜ້າທີ່ຢູ່ທີ່ໂຕະສັກສິດໃນມື້ນີ້. ຫລັງຈາກໄດ້ປະຕິບັດພິທີນີ້ແກ່ອ້າຍເອື້ອຍນ້ອງຂອງຂ້າພະເຈົ້າແລ້ວ, ຂ້າພະເຈົ້າຈຶ່ງອອກໄປຍັງແທ່ນປາໄສ, ມ່ານກັ້ງໄດ້ເລື່ອນລົງ, ແລະ ຂ້າພະເຈົ້າໄດ້ນອບນ້ອມກາຍລົງ, ພ້ອມກັບອໍລີເວີ ຄາວເດີຣີ, ໃນການອະທິຖານທີ່ຈິງຈັງ ແລະ ສະຫງົບງຽບ. ເມື່ອລຸກຂຶ້ນຈາກການອະທິຖານ, ພາບນິມິດຕໍ່ໄປນີ້ຖືກເປີດເຜີຍແກ່ພວກເຮົາ."*

*1–10, ພຣະຜູ້ເປັນເຈົ້າ ພຣະເຢໂຮວາ ປະກົດຕົວໃນລັດສະໜີພາບ ແລະ ຮັບເອົາພຣະວິຫານເຄີດແລນ ເປັນບ້ານຂອງພຣະອົງ; 11–12, ໂມເຊ ແລະ ອີລາຍ ຕ່າງກໍມາປະກົດ ແລະ ມອບຂໍກະແຈກັບຍຸກສະໄໝຂອງພວກເພິ່ນໃຫ້; 13–16, ເອລີຢາກັບມາ ແລະ ມອບຂໍກະແຈກັບຍຸກສະໄໝຂອງເພິ່ນໃຫ້ ດັ່ງທີ່ມາລາກີໄດ້ສັນຍາໄວ້.*

1 [ກ]ມ່ານໄດ້ຖືກເອົາອອກໄປຈາກຈິດໃຈຂອງພວກເຮົາ, ແລະ [ຂ]ຕາແຫ່ງຄວາມເຂົ້າໃຈຂອງພວກເຮົາໄດ້ຖືກເປີດ.

2 ພວກເຮົາໄດ້ເຫັນພຣະຜູ້ເປັນເຈົ້າ ຢືນຢູ່ທີ່ແທ່ນປາໄສຢູ່ຕໍ່ໜ້າພວກເຮົາ; ແລະ ຢູ່ໃຕ້ພຣະບາດຂອງພຣະອົງມີລານຮອງພຣະບາດທີ່ເຮັດດ້ວຍຄຳສົດ, ເປັນສີເຫລືອງ.

3 [ກ]ພຣະເນດຂອງພຣະອົງເປັນດັ່ງແປວໄຟ; ພຣະເກສາຂອງພຣະອົງຂາວເໝືອນຫິມະບໍລິສຸດ; [ຂ]ພຣະພັກຂອງພຣະອົງຮຸ່ງເຫລື້ອມແຈ້ງກວ່າຄວາມສະຫວ່າງຂອງດວງຕາເວັນ; ແລະ [ຄ]ສຸລະສຽງຂອງພຣະອົງຄືກັບສຽງນ້ຳໄຫລ ຢ່າງໄວຂອງແມ່ນ້ຳອັນກວ້າງໃຫຍ່, ແມ່ນແຕ່ສຸລະສຽງຂອງ [ງ]ພຣະເຢໂຮວາ, ກ່າວວ່າ:

4 ເຮົາເປັນຜູ້ [ກ]ທຳອິດ ແລະ ຜູ້ສຸດທ້າຍ; ເຮົາຄືເຂົາຜູ້ນັ້ນທີ່ [ຂ]ມີຊີວິດ, ເຮົາຄືຜູ້ນັ້ນທີ່ຖືກປະຫານ; ເຮົາຄື [ຄ]ຜູ້ວິງວອນແທນພວກເຈົ້ານຳພຣະບິດາ.

5 ຈົ່ງ ເບິ່ງ, ບາບ ຂອງ ພວກ ເຈົ້າ ໄດ້ ຖືກ [ກ]ອະໄພໃຫ້ແລ້ວ; ພວກເຈົ້າສະອາດຢູ່ຕໍ່ໜ້າເຮົາ; ສະນັ້ນ, ຈົ່ງເງີຍໜ້າຂຶ້ນ ແລະ ປິຕິຍິນດີເຖີດ.

6 ຈົ່ງໃຫ້ອ້າຍເອື້ອຍນ້ອງຂອງພວກເຈົ້າປິຕິຍິນດີ, ແລະ ໃຫ້ຫົວໃຈຂອງຜູ້ຄົນທັງປວງຂອງເຮົາປິຕິຍິນດີ ຜູ້ທີ່ໄດ້ [ກ]ສ້າງບ້ານແຫ່ງນີ້ດ້ວຍສຸດກຳລັງຂອງພວກເຂົາ ແດ່ນາມຂອງເຮົາ.

7 ເພາະຈົ່ງເບິ່ງ, ເຮົາໄດ້ [ກ]ຍອມຮັບເອົາ [ຂ]ບ້ານແຫ່ງນີ້, ແລະ ນາມຂອງເຮົາຈະຢູ່ທີ່ນີ້; ແລະ ເຮົາຈະສະແດງຕົນໃຫ້ປະຈັກແກ່ຜູ້ຄົນຂອງເຮົາໃນຄວາມເມດຕາໃນບ້ານແຫ່ງນີ້.

**110** 1 *ກ* ຄມພ ມ່ານ.
*ຂ* ຄພ 76:12, 19; 136:32; 138:11.
3 *ກ* ພນມ 1:14.
*ຂ* ພນມ 1:16; ຈສ—ປ 1:17.
*ຄ* ອຊກ 43:2; ພນມ 1:15; ຄພ 133:21–22.
*ງ* ຄມພ ເຢໂຮວາ.
4 *ກ* ຄມພ ລູກກົກ.
*ຂ* ພບຍ 5:24.
*ຄ* ຄມພ ວິງວອນແທນ, ຜູ້ວິງວອນແທນ.
5 *ກ* ຄມພ ອະໄພ, ໃຫ້ອະໄພ.
6 *ກ* ຄພ 109:4–5.
7 *ກ* 2 ຂຄ 7:16.
*ຂ* ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.

8 ແທ້ຈິງແລ້ວ, ເຮົາຈະ [ກ]ປະກົດຕໍ່ຜູ້ຮັບ
ໃຊ້ຂອງເຮົາ, ແລະ ກ່າວກັບພວກເຂົາດ້ວຍ
ສຽງຂອງເຮົາເອງ, ຖ້າຫາກຜູ້ຄົນຂອງເຮົາ
ຈະຮັກສາບັນຍັດຂອງເຮົາ, ແລະ ບໍ່ເຮັດໃຫ້
[ຂ]ບ້ານສັກສິດແຫ່ງນີ້ຂອງເຮົາ [ຄ]ເປິເປື້ອນ.
9 ແທ້ຈິງແລ້ວ ຫົວໃຈຂອງຫລາຍພັນຄົນ
ແລະ ຫລາຍໝື່ນຄົນຈະປິຕິຍິນດີເຫລືອ
ລົ້ນອັນເປັນຜົນຈາກ [ກ]ພອນຊຶ່ງຈະຖອກເທ
ລົງມາ, ແລະ [ຂ]ຂອງປະທານສັກສິດທີ່ຜູ້ຮັບ
ໃຊ້ຂອງເຮົາໄດ້ຮັບຢູ່ໃນບ້ານແຫ່ງນີ້.
10 ແລະ ຊື່ສຽງຂອງບ້ານແຫ່ງນີ້ຈະແຜ່
ອອກໄປຍັງຕ່າງແດນ; ແລະ ນີ້ເປັນການ
ເລີ່ມຕົ້ນພອນຊຶ່ງຈະ [ກ]ຖອກເທລົງມາເທິງ
ຫົວຂອງຜູ້ຄົນຂອງເຮົາ. ແມ່ນເປັນດັ່ງນັ້ນ.
ອາແມນ.
11 ຫລັງຈາກ [ກ]ພາບນິມິດນີ້ສິ້ນສຸດລົງ,
ຟ້າສະຫວັນໄດ້ຖືກເປີດແກ່ພວກເຮົາອີກ;
ແລະ [ຂ]ໂມເຊໄດ້ປະກົດຢູ່ຕໍ່ໜ້າພວກເຮົາ,
ແລະ ໄດ້ມອບໝາຍ [ຄ]ຂໍກະແຈແຫ່ງການ
[ງ]ເຕົ້າໂຮມຂອງຊາວອິດສະຣາເອນຈາກສີ່
ທິດຂອງແຜ່ນດິນໂລກ, ແລະ ການນຳພາ
ສິບເຜົ່າມາຈາກແຜ່ນດິນທາງ [ຈ]ເໜືອໃຫ້
ແກ່ພວກເຮົາ.
12 ຫລັງ ຈາກ ນີ້, [ກ]ອີລາຍ ໄດ້ ປະກົດ,
ແລະ ໄດ້ ມອບໝາຍ [ຂ]ຍຸກສະໄໝ ແຫ່ງ
[ຄ]ພຣະກິດຕິຄຸນຂອງອັບຣາຮາມໃຫ້, ໂດຍ
ກ່າວ ວ່າ ໃນພວກເຮົາ ແລະ ລູກ ຫລານ
ຂອງພວກເຮົາ ຄົນທຸກລຸ້ນຕໍ່ຈາກພວກເຮົາ
ຈະໄດ້ຮັບພອນ.
13 ຫລັງ ຈາກ ພາບ ນິມິດ ນີ້ ສິ້ນ ສຸດ ລົງ
ແລ້ວ, ພາບນິມິດທີ່ສຳຄັນ ແລະ ປະເສີດ
ທີ່ສຸດອີກພາບໜຶ່ງໄດ້ມາປະຈັກແກ່ພວກ
ເຮົາ; ເພາະ [ກ]ເອລີຢາຜູ້ເປັນສາດສະດາ, ຜູ້
ໄດ້ຖືກ [ຂ]ຮັບຂຶ້ນໄປສະຫວັນໂດຍບໍ່ໄດ້ຊີມ
ລົດຊາດຂອງຄວາມຕາຍ, ໄດ້ຢືນຢູ່ຕໍ່ໜ້າ
ພວກເຮົາ, ແລະ ກ່າວວ່າ:
14 ຈົ່ງ ເບິ່ງ, ເວລາມາເຖິງ ໂດຍສົມບູນ
ແລ້ວ, ຊຶ່ງໄດ້ກ່າວໄວ້ໂດຍປາກຂອງມາລາ
ກີ—ໂດຍເປັນພະຍານວ່າ ເພິ່ນ [ເອລີຢາ]
ຈະຖືກສົ່ງມາ, ກ່ອນມື້ອັນຍິ່ງໃຫຍ່ ແລະ
ໜ້າຢ້ານກົວຂອງພຣະຜູ້ເປັນເຈົ້າຈະມາ
ເຖິງ—
15 ເພື່ອ [ກ]ຫັນໃຈພໍ່ມາຫາລູກ, ແລະ ຫັນ
ໃຈລູກໄປຫາພໍ່, ຖ້າບໍ່ດັ່ງນັ້ນທັງແຜ່ນດິນ
ໂລກຈະຖືກສາບແຊ່ງ—
16 ສະນັ້ນ, ຂໍ ກະແຈ ຂອງ ຍຸກ ສະ ໄໝ
ນີ້ ຈຶ່ງຖືກມອບໄວ້ຢູ່ໃນມືຂອງພວກທ່ານ;
ແລະ ໂດຍການນີ້ ພວກທ່ານຈະຮູ້ວ່າ [ກ]ມື້
ອັນຍິ່ງໃຫຍ່ ແລະ ໜ້າຢ້ານກົວຂອງພຣະຜູ້
ເປັນເຈົ້າຢູ່ໃກ້, ແມ່ນແຕ່ຢູ່ທີ່ປະຕູ.

---

8 *ກ* ຄພ 50:45.
*ຂ* ຄມພ ສັກສິດ, ຄວາມສັກສິດ.
*ຄ* ຄພ 97:15–17.
9 *ກ* ປຖກ 12:1–3; ຄພ 39:15; ອຣຣ 2:8–11.
*ຂ* ຄພ 95:8. ຄມພ ຂອງປະທານສັກສິດ.
10 *ກ* ຄພ 105:12.
11 *ກ* ຄມພ ພາບນິມິດ.
*ຂ* ມທ 17:3.
*ຄ* ຄມພ ຂໍກະແຈຂອງຖານະປະໂລຫິດ.
*ງ* ຢຄ 6:2; ຄພ 29:7. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຈ* ຄພ 133:26–32. ຄມພ ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.
12 *ກ* ຄມພ ອີລາຍ.
*ຂ* ຄມພ ຍຸກສະໄໝ.
*ຄ* ຄລຕ 3:6–29. ຄມພ ພັນທະສັນຍາຂອງອັບຣາຮາມ.
13 *ກ* ຄມພ ເອລີຢາ.
*ຂ* ຄມພ ບຸກຄົນທີ່ຖືກປ່ຽນສະພາບແລ້ວ.
15 *ກ* ຈສ—ປ 1:38–39. ຄມພ ຄວາມລອດສຳລັບຄົນຕາຍ; ລຳດັບການສືບເຊື້ອສາຍ.
16 *ກ* ຄມພ ຍຸກສຸດທ້າຍ.

# ພາກທີ 111

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຊາເລັມ, ລັດມາສາຊູເສດສ໌, ວັນທີ 6 ເດືອນສິງຫາ, 1836. ໃນເວລານີ້ຜູ້ນໍາຂອງສາດສະໜາຈັກມີໜີ້ສິນຢ່າງຫລວງຫລາຍເນື່ອງມາຈາກການທໍາງານຂອງເຂົາເຈົ້າໃນການປະຕິບັດສາດສະໜາກິດ. ໂດຍທີ່ໄດ້ຍິນວ່າຈະມີເງິນຈໍານວນຫລວງຫລາຍໃຫ້ແກ່ເຂົາເຈົ້າຢູ່ເມືອງຊາເລັມ, ສາດສະດາ, ຊິດນີ ຣິກດອນ, ໄຮຣໍາ ສະມິດ, ແລະ ອໍລີເວີ ຄາວເດີຣີ ຈຶ່ງໄດ້ເດີນທາງໄປທີ່ນັ້ນຈາກ ເມືອງເຄີດແລນ, ລັດໂອໄຮໂອ, ເພື່ອສໍາຫລວດກວດກາເບິ່ງຂໍ້ມູນນີ້, ພ້ອມທັງສັ່ງສອນພຣະກິດຕິຄຸນໄປນໍາ. ພວກອ້າຍນ້ອງໄດ້ບັນລຸພາລະກິດຫລາຍຢ່າງຂອງສາດສະໜາຈັກ ແລະ ໄດ້ສັ່ງສອນພຣະກິດຕິຄຸນນໍາອີກ. ເມື່ອເຫັນໄດ້ວ່າ ເຂົາເຈົ້າຈະບໍ່ໄດ້ຮັບເງິນ, ແລ້ວເຂົາເຈົ້າຈຶ່ງໄດ້ກັບໄປເມືອງເຄີດແລນ. ຫລາຍປັດໃຈທີ່ສໍາຄັນກ່ຽວກັບເລື່ອງນີ້ສະທ້ອນອອກມາໃນຖ້ອຍຄໍາຂອງການເປີດເຜີຍນີ້.*

*1–5, ພຣະຜູ້ເປັນເຈົ້າດູແລຄວາມຕ້ອງການທາງໂລກຂອງຜູ້ຮັບໃຊ້ຂອງພຣະອົງ; 6–11, ພຣະອົງຈະຈັດການກັບຊີໂອນດ້ວຍຄວາມເມດຕາ ແລະ ຈັດຕຽມທຸກສິ່ງທັງປວງເພື່ອຜົນປະໂຫຍດຂອງຜູ້ຮັບໃຊ້ຂອງພຣະອົງ.*

1 ເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ບໍ່ແມ່ນວ່າບໍ່ພໍໃຈກັບການເດີນທາງມາເທື່ອນີ້ຂອງພວກເຈົ້າ, ເຖິງແມ່ນຈະເປັນຄວາມໂງ່ຈ້າຂອງພວກເຈົ້າກໍຕາມ.

2 ເຮົາມີຊັບສົມບັດຢ່າງຫລວງຫລາຍໃຫ້ພວກເຈົ້າ ຢູ່ໃນເມືອງນີ້, ເພື່ອຜົນປະໂຫຍດຂອງຊີໂອນ, ແລະ ຜູ້ຄົນຢ່າງຫລວງຫລາຍໃນເມືອງນີ້, ຜູ້ທີ່ເຮົາຈະເຕົ້າໂຮມອອກມາໃນເວລາອັນເໝາະສົມ ເພື່ອຜົນປະໂຫຍດຂອງຊີໂອນ, ໂດຍຜ່ານພວກເຈົ້າເປັນເຄື່ອງມື.

3 ສະນັ້ນ, ຈຶ່ງເປັນການສົມຄວນທີ່ພວກເຈົ້າຈະສ້າງຄວາມຄຸ້ນເຄີຍກັບຜູ້ຄົນຢູ່ໃນເມືອງນີ້, ຕາມທີ່ພວກເຈົ້າຈະຖືກພາໄປ, ແລະ ຕາມທີ່ມັນຈະຖືກມອບໃຫ້ແກ່ພວກເຈົ້າ.

4 ແລະ ເຫດການຈະບັງເກີດຂຶ້ນໃນເວລາອັນເໝາະສົມ ຄືເຮົາຈະມອບເມືອງນີ້ໄວ້ໃນມືຂອງພວກເຈົ້າ, ເພື່ອພວກເຈົ້າຈະມີອໍານາດເໜືອມັນ, ເຖິງຂະໜາດທີ່ພວກເຂົາບໍ່ພົບເຫັນສ່ວນທີ່ເປັນຄວາມລັບຂອງພວກເຈົ້າ; ແລະ ຄວາມລໍ້າລວຍຂອງມັນກ່ຽວກັບຄໍາ ແລະ ເງິນ ຈະເປັນຂອງພວກເຈົ້າ.

5 ຢ່າເປັນຫ່ວງເລີຍເລື່ອງ [a]ໜີ້ສິນຂອງພວກເຈົ້າ, ເພາະເຮົາຈະມອບອໍານາດໃຫ້ພວກເຈົ້າເພື່ອຊໍາລະມັນ.

6 ຢ່າເປັນຫ່ວງເລີຍເລື່ອງຊີໂອນ, ເພາະເຮົາຈະຈັດການກັບນາງດ້ວຍຄວາມເມດຕາ.

7 ຈົ່ງຢູ່ຕໍ່ໄປໃນສະຖານທີ່ແຫ່ງນີ້, ແລະໃນພາກພື້ນຕ່າງໆທີ່ອ້ອມຮອບ;

8 ແລະ ສະຖານທີ່ຊຶ່ງເປັນຄວາມປະສົງຂອງເຮົາທີ່ຈະໃຫ້ພວກເຈົ້າຢູ່ຕໍ່ໄປ, ໃຫ້ຢູ່ສ່ວນຫລາຍ, ຈະຖືກເຮັດໃຫ້ເປັນທີ່ຮູ້ຈັກ

**111** 5 *ກ* ຄພ 64:27–29.

ແກ່ພວກເຈົ້າ ໂດຍ [ກ]ສັນຕິສຸກ ແລະ ໂດຍ
ອຳນາດຂອງພຣະວິນຍານຂອງເຮົາ, ທີ່ຈະ
ຫລັ່ງໄຫລມາສູ່ພວກເຈົ້າ.
9 ສະຖານທີ່ແຫ່ງນີ້ ພວກເຈົ້າຈະໄດ້ມາ
ໂດຍການເຊົ່າ. ແລະ ຈົ່ງຊອກຫາຢ່າງພາກ
ພຽນກ່ຽວກັບຜູ້ອາໄສໃນສະໄໝກ່ອນ ແລະ
ຜູ້ໄດ້ມາຕັ້ງຖິ່ນຖານຢູ່ເມືອງນີ້;
10 ເພາະມີຊັບສົມບັດຢ່າງຫລວງຫລາຍ
ກວ່າໜຶ່ງຢ່າງ ໃຫ້ພວກເຈົ້າຢູ່ໃນເມືອງນີ້.
11 ສະນັ້ນ, ພວກເຈົ້າຈົ່ງ [ກ]ສະຫລາດດັ່ງ
ງູ ແຕ່ປາດສະຈາກບາບ; ແລະ ເຮົາຈະສັ່ງ
ທຸກສິ່ງທັງປວງເພື່ອ [ຂ]ຜົນປະໂຫຍດຂອງ
ພວກເຈົ້າ, ໃຫ້ໄວເທົ່າທີ່ພວກເຈົ້າຈະສາ
ມາດຮັບມັນໄດ້. ອາແມນ.

## ພາກທີ 112

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ ເຖິງທອມມັສ ບີ ມາສ໌, ທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 23 ເດືອນກໍລະກົດ, 1837, ກ່ຽວກັບອັກຄະສາວົກສິບສອງຂອງພຣະເມສານ້ອຍ. ການເປີດເຜີຍນີ້ໄດ້ຮັບໃນມື້ທີ່ ແອວເດີ ຮີເບີ ຊີ ຄິມໂບ ແລະ ແອວເດີ ອໍສັນ ຮາຍດ໌ ໄດ້ສັ່ງສອນພຣະກິດຕິຄຸນ ເປັນເທື່ອທຳອິດ ໃນປະເທດອັງກິດ. ໃນເວລານັ້ນ ທອມມັສ ບີ ມາສ໌ ໄດ້ເປັນປະທານຂອງກຸ່ມອັກຄະສາວົກສິບສອງ.*

*1–10, ອັກຄະສາວົກສິບສອງຕ້ອງສົ່ງພຣະກິດຕິຄຸນ ແລະ ເປົ່າສຽງເຕືອນປະຊາຊາດ ແລະ ຜູ້ຄົນທັງປວງ; 11–15, ພວກເພິ່ນຕ້ອງແບກໄມ້ກາງແຂນຂອງພວກເພິ່ນເອງ, ຕິດຕາມພຣະເຢຊູ, ແລະ ລ້ຽງດູແກະຂອງພຣະອົງ; 16–20, ຄົນທີ່ຍອມຮັບເອົາຝ່າຍປະທານສູງສຸດຍ່ອມຮັບເອົາພຣະຜູ້ເປັນເຈົ້າ; 21–29, ຄວາມມືດປົກຄຸມແຜ່ນດິນໂລກ, ແລະ ຄົນທີ່ເຊື່ອ ແລະ ຮັບບັບຕິສະມາເທົ່ານັ້ນຈະລອດ; 30–34, ຝ່າຍປະທານສູງສຸດ ແລະ ອັກຄະສາວົກສິບສອງຖືຂໍກະແຈຂອງຍຸກສະໄໝຂອງຄວາມສົມບູນແຫ່ງເວລາ.*

1 ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້ກັບເຈົ້າ ຜູ້ຮັບໃຊ້ຂອງເຮົາ
ທອມມັສ: ເຮົາໄດ້ຍິນຄຳອະທິຖານຂອງ
ເຈົ້າ; ແລະ ຂອງທານຂອງເຈົ້າໄດ້ຂຶ້ນມາ
ເປັນ [ກ]ອະນຸສອນຢູ່ຕໍ່ໜ້າເຮົາ, ແທນຄົນ
ເຫລົ່ານັ້ນ, ອ້າຍນ້ອງຂອງເຈົ້າ, ຜູ້ໄດ້ຖືກ
ເລືອກໃຫ້ສະແດງປະຈັກພະຍານເຖິງ
ນາມຂອງເຮົາ ແລະ ໃຫ້ [ຂ]ສົ່ງມັນໄປຫາ
ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ,
ແລະ ທຸກຜູ້ຄົນທັງປວງ, ແລະ ຮັບການ
ແຕ່ງຕັ້ງໂດຍໃຫ້ຜູ້ຮັບໃຊ້ຂອງເຮົາເປັນ
ເຄື່ອງມື.
2 ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າ,
ມີບາງເລື່ອງໃນໃຈເຈົ້າ ແລະ ຢູ່ກັບເຈົ້າ ຊຶ່ງ
ເລື່ອງນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ພໍໃຈ
ຫລາຍປານໃດ.
3 ເຖິງຢ່າງໃດກໍຕາມ, ຕາບໃດທີ່ເຈົ້າ
ຍັງ [ກ]ຖ່ອມຕົວ ເຈົ້າຈະຖືກເຮັດໃຫ້ສູງ

8 *ກ* ຄພ 27:16.
ຄມພ ສະຫງົບ,
ຄວາມສະຫງົບ.

11 *ກ* ມທ 10:16.
*ຂ* ຣມ 8:28;
ຄພ 90:24; 100:15.

**112** 1 *ກ* ກຈກ 10:4.
*ຂ* ຄພ 18:28.
3 *ກ* ມທ 23:12; ລກ 14:11.

ຂຶ້ນ; ສະນັ້ນ, ບາບ ທັງ ໝົດ ຂອງ ເຈົ້າ ໄດ້
ຖືກອະໄພໃຫ້ແລ້ວ.
4 ຈົ່ງໃຫ້ໃຈຂອງເຈົ້າ [ກ]ເບີກບານຢູ່ຕໍ່ໜ້າ
ເຮົາເຖີດ; ແລະ ຈົ່ງກ່າວພະຍານເຖິງນາມ
ຂອງເຮົາ, ບໍ່ພຽງແຕ່ກັບ [ຂ]ຄົນຕ່າງຊາດເທົ່າ
ນັ້ນ, ແຕ່ກັບ [ຄ]ຊາວຢິວນຳອີກ; ແລະ ຈົ່ງສົ່ງ
ຄຳຂອງເຮົາອອກໄປເຖິງທີ່ສຸດຂອງແຜ່ນ
ດິນໂລກ.
5 ສະນັ້ນ ເຈົ້າ ຈົ່ງ [ກ]ຕໍ່ ສູ້ ເຊົ້າ ແລ້ວ ເຊົ້າ
ເລົ່າ; ແລະ ວັນ ແລ້ວ ວັນ ເລົ່າ ຈົ່ງ ໃຫ້ ສຽງ
[ຂ]ເຕືອນຂອງເຈົ້າອອກໄປ; ແລະ ເມື່ອກາງ
ຄືນ ມາ ເຖິງ ຢ່າ ໃຫ້ຜູ້ອາໄສຂອງແຜ່ນ ດິນ
ໂລກເຫງົານອນ, ເນື່ອງຈາກຄຳເວົ້າຂອງ
ເຈົ້າ.
6 ໃຫ້ການອາໄສຢູ່ຂອງເຈົ້າເປັນທີ່ຮູ້ຈັກ
ໃນ ຊີ ໂອນ, ແລະ ຢ່າ [ກ]ຍ້າຍ ບ້ານ ເຮືອ ນ
ຂອງ ເຈົ້າ; ເພາະ ເຮົາ, ພຣະຜູ້ ເປັນ ເຈົ້າ, ມີ
ວຽກງານອັນຍິ່ງໃຫຍ່ໃຫ້ເຈົ້າເຮັດ, ໃນການ
ປະກາດນາມຂອງເຮົາໃນບັນດາລູກຫລານ
ມະນຸດ.
7 ສະນັ້ນ, ຈົ່ງ [ກ]ຄາດ ແອວ ຂອງ ເຈົ້າ ເພື່ອ
ວຽກງານນັ້ນ. ໃຫ້ສວມຕີນຂອງເຈົ້ານຳອີກ,
ເພາະ ເຈົ້າ ໄດ້ ຖືກ ເລືອກ, ແລະ ທາງ ຂອງ
ເຈົ້າຢູ່ຕາມທຸບເຂົາ, ແລະ ໃນບັນດາປະຊາ
ຊາດທັງຫລາຍ.
8 ແລະ ໂດຍ ຖ້ອຍ ຄຳ ຂອງ ເຈົ້າ ຄົນ ສູງ
ສັກຫລາຍຄົນຈະຖືກພາລົງມາ [ກ]ຕ່ຳ, ແລະ
ໂດຍຖ້ອຍຄຳຂອງເຈົ້າ ຄົນຕ່ຳຕ້ອຍຫລາຍ
ຄົນຈະຖືກເຮັດໃຫ້ສູງຂຶ້ນ.
9 ສຽງ ຂອງ ເຈົ້າ ຈະ ເປັນ ການ ຕິ ຕຽນ ຜູ້
ລ່ວງລະເມີດ; ແລະ ໃນການຕິຕຽນຂອງ
ເຈົ້າກໍໃຫ້ລີ້ນຂອງຜູ້ໃສ່ຮ້າຍຢຸດຕິການບິດ
ເບືອນຂອງມັນ.
10 ຈົ່ງ [ກ]ຖ່ອມຕົວ; ແລະ ພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງເຈົ້າ ຈະຈູງມືພາເຈົ້າ
ໄປ, ແລະ ໃຫ້ຄຳຕອບ ແກ່ຄຳອະທິຖານ
ຂອງເຈົ້າ.
11 ເຮົາຮູ້ໃຈຂອງເຈົ້າ, ແລະ ໄດ້ຍິນຄຳ
ອະທິຖານຂອງເຈົ້າກ່ຽວກັບພວກອ້າຍນ້ອງ
ຂອງເຈົ້າ. ຢ່າລຳອຽງພວກເຂົາໃນ [ກ]ຄວາມ
ຮັກຫລາຍກວ່າຄົນອື່ນໆ, ແຕ່ໃຫ້ຄວາມຮັກ
ຂອງເຈົ້າທີ່ມີຕໍ່ພວກເຂົາເໝືອນກັບທີ່ມີຕໍ່
ຕົວເຈົ້າເອງ; ແລະ ໃຫ້ຄວາມຮັກຂອງເຈົ້າ
ມີຢ່າງລົ້ນເຫລືອກັບມະນຸດທັງປວງ, ແລະ
ກັບທຸກຄົນທີ່ຮັກນາມຂອງເຮົາ.
12 ແລະ ຈົ່ງອະທິຖານເພື່ອພວກອ້າຍ
ນ້ອງອັກຄະສາວົກສິບສອງຂອງເຈົ້າ. ຈົ່ງ
ຕັກເຕືອນພວກເຂົາຢ່າງຄົມຄາຍ ເພື່ອເຫັນ
ແກ່ນາມຂອງເຮົາ, ແລະ ໃຫ້ພວກເຂົາໄດ້
ຮັບການຕັກເຕືອນສຳລັບບາບທັງໝົດຂອງ
ພວກ ເຂົາ, ແລະ ຈົ່ງຊື່ສັດຢູ່ຕໍ່ໜ້າເຮົາຕໍ່
[ກ]ນາມຂອງເຮົາ.
13 ແລະ ຫລັງ ຈາກ [ກ]ການ ລໍ້ ລວງ ຂອງ
ພວກເຂົາ, ແລະ [ຂ]ຄວາມທຸກຍາກລຳບາກ
ຢ່າງ ມາກ ມາຍ ຂອງ ພວກ ເຂົາ, ຈົ່ງ ເບິ່ງ,
ເຮົາ, ພຣະຜູ້ ເປັນ ເຈົ້າ, ຈະ ຊາວ ຫາ ພວກ
ເຂົາ, ແລະ ຖ້າ ຫາກ ພວກ ເຂົາ ບໍ່ ເຮັດ ໃຈ
ຂອງພວກເຂົາແຂງກະດ້າງ, ແລະ ບໍ່ແຂງຄໍ

---

4 ກ ມທ 9:2;
ຢຮ 16:33.
ຂ ຄພ 18:6; 90:8–9.
ຄ ຄພ 19:27.
5 ກ ຢດ 1:3.
ຂ ຄພ 1:4–5.
6 ກ ພສສ 125:1.
7 ກ ອຟຊ 6:13–17.
8 ກ ຄມພ ຖ່ອມຕົນ,
ຄວາມຖ່ອມຕົນ.
10 ກ ສພສ 18:12.
11 ກ ມທ 5:43–48.
ຄມພ ໃຈບຸນ,
ຄວາມໃຈບຸນ;
ຮັກ, ຄວາມຮັກ.
12 ກ ຄມພ ພຣະເຢຊູຄຣິດ—
ການຮັບເອົາພຣະນາມຂອງ
ພຣະເຢຊູຄຣິດໄວ້ກັບເຮົາ.
13 ກ ຄມພ ລໍ້ລວງ, ການລໍ້ລວງ.
ຂ ຢຮ 16:33;
ພນມ 7:13–14;
ຄພ 58:3–4.

ຕໍ່ເຮົາ, ແລ້ວພວກເຂົາຈະ [ຄ]ປ່ຽນໃຈ, ແລະ
ເຮົາຈະປິ່ນປົວພວກເຂົາ.
14 ບັດ ນີ້, ເຮົາກ່າວກັບ ເຈົ້າ, ແລະ ສິ່ງ
ທີ່ເຮົາກ່າວກັບ ເຈົ້າ, ເຮົາກ່າວກັບອັກຄະ
ສາວົກສິບສອງຄົນ: ຈົ່ງລຸກຂຶ້ນ ແລະ ຈົ່ງ
ຄາດ ແອວ ຂອງ ເຈົ້າ, ຈົ່ງ ແບກ [ກ]ໄມ້ກາງ
ແຂນ ຂອງ ເຈົ້າ, ຕິດ ຕາມເຮົາມາ, ແລະ
[ຂ]ລ້ຽງດູແກະຂອງເຮົາ.
15 ຢ່າຍົກຕົນເອງຂຶ້ນ; ຢ່າ [ກ]ກະບົດຕໍ່
ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ; ເພາະຕາມ
ຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ເຮົາ
ຢູ່ກັບລາວ, ແລະ ພຣະຫັດຂອງເຮົາຈະຢູ່
ເທິງລາວ; ແລະ [ຂ]ຂໍກະແຈຊຶ່ງເຮົາໄດ້ມອບ
ໃຫ້ແກ່ລາວ, ແລະ ໃຫ້ແກ່ເຈົ້ານຳອີກ,
ຈະບໍ່ຖືກເອົາໄປຈາກລາວຈົນກວ່າເຮົາ
ຈະມາ.
16 ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ກັບ
ເຈົ້າ, ຜູ້ຮັບໃຊ້ຂອງເຮົາ ທອມມັສ, ເຈົ້າຄືຜູ້
ທີ່ເຮົາໄດ້ເລືອກໃຫ້ຖືຂໍກະແຈແຫ່ງອານາ
ຈັກຂອງເຮົາ, ດັ່ງທີ່ກ່ຽວກັບອັກຄະສາວົກ
ສິບສອງ, ທົ່ວບັນດາປະຊາຊາດທັງປວງ—
17 ເພື່ອວ່າເຈົ້າຈະເປັນຜູ້ຮັບໃຊ້ຂອງ
ເຮົາ ທີ່ຈະໄຂປະຕູອານາຈັກໃນທຸກບ່ອນທີ່
ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ແລະ ຜູ້ຮັບໃຊ້
ຂອງເຮົາ [ກ]ຊິດນີ, ແລະ ຜູ້ຮັບໃຊ້ຂອງເຮົາ
[ຂ]ໄຣຣຳ, ມາຫາບໍ່ໄດ້;
18 ເພາະເຮົາໄດ້ມອບພາລະຂອງໜ່ວຍ
ທັງປວງ ຂອງສາດສະໜາຈັກໃຫ້ເຂົາເຈົ້າ
ເຮັດຊົ່ວໄລຍະໜຶ່ງ.
19 ດັ່ງນັ້ນ, ບ່ອນໃດກໍຕາມທີ່ເຂົາເຈົ້າ
ຈະສົ່ງເຈົ້າໄປ, ຈົ່ງໄປ, ແລະ ເຮົາຈະໄປ
ກັບເຈົ້າ; ແລະ ໃນບ່ອນໃດກໍຕາມທີ່ເຈົ້າຈະ
ປະກາດນາມຂອງເຮົາ ປະຕູທີ່ມີ [ກ]ປະສິດທິ
ພາບຈະເປີດໄວ້ໃຫ້ເຈົ້າ, ເພື່ອວ່າພວກເຂົາ
ຈະຮັບເອົາຄຳຂອງເຮົາ.
20 ຜູ້ໃດກໍຕາມທີ່ [ກ]ຮັບເອົາຄຳຂອງເຮົາ
ກໍຮັບເອົາເຮົາ, ແລະ ຜູ້ໃດກໍຕາມທີ່ຮັບ
ເອົາເຮົາ, ກໍຮັບເອົາຄົນເຫລົ່ານັ້ນ, ຝ່າຍ
ປະທານສູງສຸດ, ຜູ້ທີ່ເຮົາໄດ້ສົ່ງມາ, ຜູ້ທີ່ເຮົາ
ໄດ້ຕັ້ງເປັນຜູ້ປຶກສາໃຫ້ເຈົ້າເພື່ອເຫັນແກ່
ນາມຂອງເຮົາ.
21 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບເຈົ້າ
ວ່າ ຜູ້ໃດກໍຕາມທີ່ເຈົ້າຈະສົ່ງໄປໃນນາມ
ຂອງເຮົາ, ໂດຍສຽງຂອງພວກອ້າຍນ້ອງ
ຂອງເຈົ້າ, ອັກຄະສາວົກ [ກ]ສິບສອງ, ທີ່ເຈົ້າ
ຮັບຮອງ ແລະ ໃຫ້ [ຂ]ສິດອຳນາດຢ່າງຖືກ
ຕ້ອງ, ຈະມີອຳນາດທີ່ຈະເປີດປະຕູຂອງອາ
ນາຈັກຂອງເຮົາ ໃຫ້ປະຊາຊາດໃດກໍໄດ້ບໍ່
ວ່າບ່ອນໃດກໍຕາມທີ່ເຈົ້າຈະສົ່ງພວກເຂົາ
ໄປ—
22 ຕາບໃດທີ່ພວກເຂົາຍັງຖ່ອມຕົວຢູ່ຕໍ່
ໜ້າເຮົາ, ແລະ ຍຶດໝັ້ນຢູ່ໃນຄຳຂອງເຮົາ,
ແລະ [ກ]ເຊື່ອຟັງສຸລະສຽງຂອງພຣະວິນຍານ
ຂອງເຮົາ.
23 ຕາມ ຈິງ, ຕາມ ຈິງ ແລ້ວ, ເຮົາ ກ່າວ
ກັບພວກເຈົ້າ, [ກ]ຄວາມມືດປົກຄຸມແຜ່ນດິນ
ໂລກ, ແລະ ຄວາມມືດອັນຮ້າຍແຮງປົກ
ຄຸມຈິດໃຈຜູ້ຄົນ, ແລະ ເນື້ອໜັງທັງປວງ

---

13 *ຄ* 3 ນຟ 18:32. ຄມພ ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.
14 *ກ* ມທ 16:24; ປຈສ ມທ 16:25–26 (ພາກທ້ອຍທ້າຍ); ລກ 9:23.
*ຂ* ຢຮ 21:15–17.
15 *ກ* ຄມພ ກະບົດ, ການກະບົດ.
*ຂ* ຄພ 28:7. ຄມພ ຂໍກະແຈຂອງຖານະປະໂລຫິດ.
17 *ກ* ຄມພ ຣິກດອນ, ຊິດນີ.
*ຂ* ຄມພ ສະມິດ, ໄຣຣຳ.
19 *ກ* 1 ກຣທ 16:9; ຄພ 118:3.
20 *ກ* ຄພ 84:35–38.
21 *ກ* ຄພ 107:34–35.
*ຂ* ຄມພ ສິດອຳນາດ.
22 *ກ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
23 *ກ* ອຊຢ 60:2; ມກ 3:6; ຄພ 38:11. ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ—ການປະຖິ້ມຄວາມເຊື່ອຂອງສາດສະໜາຈັກຄຣິດສະຕຽນລຸ້ນເດີມ.

ກັບມາ [ຂ]ເສື່ອມໂຊມລົງຢູ່ຕໍ່ໜ້າເຮົາ.
24 ຈົ່ງເບິ່ງ, [ກ]ການແກ້ແຄ້ນມາເຖິງຜູ້ອາ
ໄສຂອງແຜ່ນດິນໂລກຢ່າງວ່ອງໄວ, ວັນ
ແຫ່ງພຣະພິໂລດ, ວັນແຫ່ງການເຜົາໄໝ້,
ວັນແຫ່ງການອ້າງວ້າງ, ແຫ່ງ [ຂ]ການຮ້ອງ
ໄຫ້, ແຫ່ງການຄວນຄາງ, ແລະ ແຫ່ງການ
ເສົ້າສະຫລົດໃຈ; ແລະ ດັ່ງລົມບ້າໝູ ມັນຈະ
ເກີດຂຶ້ນທົ່ວພື້ນແຜ່ນດິນໂລກ, ພຣະຜູ້ເປັນ
ເຈົ້າໄດ້ກ່າວ.
25 ແລະ ເທິງຄົວເຮືອນຂອງເຮົາມັນຈະ
[ກ]ເລີ່ມຕົ້ນ, ແລະ ຈາກຄົວເຮືອນຂອງເຮົາ
ມັນຈະອອກໄປ, ພຣະຜູ້ເປັນເຈົ້າໄດ້ກ່າວ;
26 ທຳອິດ ໃນບັນດາຄົນ ເຫລົ່ານັ້ນໃນ
ບັນດາພວກເຈົ້າ, ພຣະຜູ້ເປັນເຈົ້າໄດ້ກ່າວ,
ຜູ້ທີ່ [ກ]ອ້າງວ່າຮູ້ຈັກນາມຂອງເຮົາ ແລະ
ຍັງບໍ່ [ຂ]ຮູ້ຈັກເຮົາເທື່ອ, ແລະ ໄດ້ [ຄ]ໝິ່ນປະ
ໝາດເຮົາທ່າມກາງຄົວເຮືອນຂອງເຮົາ,
ພຣະຜູ້ເປັນເຈົ້າໄດ້ກ່າວ.
27 ສະນັ້ນ, ຈົ່ງເບິ່ງວ່າ ພວກເຈົ້າບໍ່ເປັນ
ຫ່ວງກັງວົນກັບການງານໃນສາດສະໜາຈັກ
ຂອງເຮົາໃນສະຖານທີ່ນີ້, ພຣະຜູ້ເປັນເຈົ້າ
ໄດ້ກ່າວ.
28 ແຕ່ຈົ່ງ [ກ]ເຮັດໃຫ້ໃຈຂອງພວກເຈົ້າບໍ
ລິສຸດຢູ່ຕໍ່ໜ້າເຮົາ; ແລະ ຈາກນັ້ນພວກເຈົ້າ
ຈົ່ງ [ຂ]ໄປທົ່ວໂລກ, ແລະ ສັ່ງສອນພຣະກິດ
ຕິຄຸນຂອງເຮົາແກ່ມະນຸດສະໂລກທັງໝົດຜູ້
ທີ່ຍັງບໍ່ໄດ້ຮັບມັນເທື່ອ;
29 ແລະ ຄົນທີ່ [ກ]ເຊື່ອ ແລະ ຮັບ [ຂ]ບັບຕິ
ສະມາຈະລອດ, ແລະ ຄົນທີ່ບໍ່ເຊື່ອ, ແລະ ບໍ່
ຮັບບັບຕິສະມາ, ຈະ [ຄ]ອັບປະໂຫຍດ.
30 ເພາະ ແກ່ ເຈົ້າ, [ກ]ອັກຄະ ສາວົກ ສິບ
ສອງ, ແລະ ຄົນເຫລົ່ານັ້ນ, [ຂ]ຝ່າຍປະທານ
ສູງສຸດ, ຜູ້ໄດ້ຖືກກຳນົດໄວ້ໃຫ້ເປັນຜູ້ປຶກ
ສາຂອງພວກເຈົ້າ ແລະ ເປັນຜູ້ນຳຂອງ
ພວກເຈົ້າ, ຈະມອບອຳນາດຂອງຖານະປະ
ໂລຫິດນີ້ໃຫ້, ເພື່ອວັນເວລາສຸດທ້າຍ ແລະ
ເພື່ອເປັນເທື່ອສຸດທ້າຍ, ຊຶ່ງໃນເວລາດັ່ງ
ກ່າວເປັນ [ຄ]ຍຸກສະໄໝຂອງຄວາມສົມບູນ
ແຫ່ງເວລາ.
31 ຊຶ່ງອຳນາດນີ້ພວກເຈົ້າດຳລົງຢູ່, ໃນ
ຄວາມສຳພັນກັບຄົນທັງຫລາຍຜູ້ທີ່ໄດ້ຮັບ
ຍຸກສະໄໝໃນເວລາໃດເວລາໜຶ່ງຕັ້ງແຕ່
ຕົ້ນຂອງການສ້າງ;
32 ເພາະຕາມຄວາມຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ [ກ]ຂໍກະແຈຂອງຍຸກສະ
ໄໝ, ຊຶ່ງພວກເຈົ້າໄດ້ຮັບ, ໄດ້ສືບທອດ [ຂ]ມາ
ຈາກບັນພະບຸລຸດ, ແລະ ສຸດທ້າຍນີ້, ຖືກສົ່ງ
ລົງມາຈາກສະຫວັນຫາພວກເຈົ້າ.
33 ຕາມຄວາມ ຈິງ ແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ຈົ່ງເບິ່ງ ການເອີ້ນຂອງພວກ
ເຈົ້າຍິ່ງໃຫຍ່ພຽງໃດ. ຈົ່ງ [ກ]ຊຳລະໃຈຂອງ
ພວກເຈົ້າ ແລະ ອາພອນຂອງພວກເຈົ້າໃຫ້
ສະອາດ, ຖ້າບໍ່ດັ່ງນັ້ນເລືອດຂອງຄົນລຸ້ນນີ້
ຈະຖືກ [ຂ]ຮຽກຮ້ອງຈາກມືຂອງພວກເຈົ້າ.

---

23 *ຂ* ຄພ 10:20–23.
24 *ກ* ຄມພ ແກ້ແຄ້ນ, ການແກ້ແຄ້ນ.
*ຂ* ຄພ 124:8.
25 *ກ* 1 ປຕ 4:17–18.
26 *ກ* ມທ 7:21–23; ຄພ 41:1; 56:1.
*ຂ* ລກ 6:46; ມຊຢ 26:24–27; 3 ນຟ 14:21–23.
*ຄ* ຄມພ ໝິ່ນປະໝາດ, ການໝິ່ນປະໝາດ.
28 *ກ* ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
*ຂ* ມຣກ 16:15–16.
29 *ກ* ມມ 9:22–23; ຄພ 20:25–26.
*ຂ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຄ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
30 *ກ* ຄມພ ອັກຄະສາວົກ.
*ຂ* ຄມພ ຝ່າຍປະທານສູງສຸດ.
*ຄ* ອຟຊ 1:10; ຄພ 27:13; 124:40–42. ຄມພ ຍຸກສະໄໝ.
32 *ກ* ຄພ 110:11–16. ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຂ* ອຣຮ 1:2–3.
33 *ກ* ຢຄ 1:19.
*ຂ* ຄພ 72:3.

34 ຈົ່ງຊື່ສັດຈົນກວ່າເຮົາຈະມາ, ເພາະ
ເຮົາຈະ [ກ]ມາຢ່າງໄວ; ແລະ ລາງວັນຂອງ
ເຮົາຢູ່ກັບເຮົາເພື່ອຊົດເຊີຍໃຫ້ມະນຸດທຸກ
ຄົນຕາມທີ່ [ຂ]ວຽກງານຂອງເຂົາຈະເປັນ.
ເຮົາຄືອາລະຟາ ແລະ ໂອເມຄາ. ອາແມນ.

# ພາກທີ 113

*ຄຳຕອບຕໍ່ຄຳຖາມບາງຢ່າງກ່ຽວກັບການຂຽນຂອງເອຊາຢາ, ໄດ້ຖືກມອບໃຫ້ໂດຍໂຈເຊັບ ສະມິດ ຜູ້ເປັນສາດສະດາ, ຢູ່ທີ່ ຫລື ໃກ້ເມືອງຟາແວັດ, ລັດມີເຊີຣີ, ເດືອນມີນາ 1838.*

*1–6, ຍາດວົງຂອງເຢຊີ, ກິ່ງງ່າທີ່ອອກມາຈາກທີ່ນັ້ນ, ແລະ ຮາກຂອງເຢຊີຖືກແຈ້ງບອກ; 7–10, ຜູ້ທີ່ເຫລືອຢູ່ຂອງຊີໂອນທີ່ໄດ້ກະຈັດກະຈາຍໄປມີສິດໃນຖານະປະໂລຫິດ ແລະ ຖືກເອີ້ນໃຫ້ກັບໄປຫາພຣະຜູ້ເປັນເຈົ້າ.*

1 ຜູ້ເປັນຍາດວົງຂອງ [ກ]ເຢຊີໄດ້ກ່າວເຖິງ
ຢູ່ໃນຂໍ້ທີ 1, 2, 3, 4, ແລະ 5 ຂອງບົດທີ 11
ຂອງເອຊາຢາ?
2 ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້: ນີ້ຄືພຣະຄຣິດ.
3 ແມ່ນຫຍັງຄືກິ່ງງ່າທີ່ໄດ້ກ່າວເຖິງຢູ່ໃນ
ຂໍ້ທຳອິດຂອງບົດທີ 11 ຂອງ ເອຊາຢາ, ວ່າ
ຈະມາຈາກຍາດວົງຂອງເຢຊີ?
4 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງ
ນີ້: ນີ້ຄືຜູ້ຮັບໃຊ້ຄົນໜຶ່ງຢູ່ໃນພຣະຫັດຂອງ
ພຣະຄຣິດ, ຜູ້ເປັນພາກສ່ວນໜຶ່ງທີ່ສືບ
ຕະກຸນຂອງເຢຊີ ເຊັ່ນດຽວກັບ [ກ]ເອຟະ
ຣາອິມ, ຫລື ເປັນເຊື້ອສາຍຂອງໂຢ
ເຊັບ, ຜູ້ຊຶ່ງມີ [ຂ]ອຳນາດໃຫ້ໄວ້ຢ່າງຫລວງ
ຫລາຍ.
5 ແມ່ນຫຍັງຄືຮາກຂອງເຢຊີທີ່ກ່າວເຖິງ
ຢູ່ໃນຂໍ້ທີ 10 ຂອງບົດທີ 11?
6 ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້,
ນີ້ຄືຜູ້ສືບຕະກຸນຂອງເຢຊີ, ເຊັ່ນດຽວກັບ
ຂອງໂຢເຊັບ, ຊຶ່ງມີສິດທີ່ຈະຮັບຖານະປະ
ໂລຫິດຢ່າງຖືກຕ້ອງ, ແລະ [ກ]ຂໍກະແຈຂອງ
ອານາຈັກ, ເພື່ອເປັນ [ຂ]ທຸງສັນຍານ, ແລະ
ເພື່ອ [ຄ]ການເຕົ້າໂຮມຂອງຜູ້ຄົນຂອງເຮົາ
ໃນຍຸກສຸດທ້າຍ.
7 ຄຳຖາມໂດຍອີລາຍ ຮິກບີ: ແມ່ນຫຍັງ
ຄືຄວາມໝາຍຂອງພຣະບັນຊາໃນ ເອຊາ
ຢາ, ບົດທີ 52, ຂໍ້ ທີ 1, ຊຶ່ງໄດ້ກ່າວວ່າ: ຈົ່ງ
ເຂັ້ມແຂງຍິ່ງໃຫຍ່, ໂອ້ ຊີໂອນ—ແລະ ຜູ້
ຄົນທີ່ເອຊາຢາໄດ້ກ່າວເຖິງ?
8 ເພິ່ນໄດ້ອ້າງເຖິງຄົນເຫລົ່ານັ້ນທີ່ພຣະ
ເຈົ້າຈະເອີ້ນໃນຍຸກສຸດທ້າຍ, ຜູ້ທີ່ຈະດຳ
ລົງອຳນາດຂອງຖານະປະໂລຫິດ ເພື່ອ
ນຳ [ກ]ຊີໂອນມາອີກ, ແລະ ການໄຖ່ອິດສະ
ຣາເອນ; ແລະ ການສວມ [ຂ]ກຳລັງຂອງນາງ
ຄືການສວມສິດອຳນາດຂອງ ຖານະປະ
ໂລຫິດ, ຊຶ່ງນາງ, ຊີໂອນ, ມີ [ຄ]ສິດໂດຍທາ

34 *ກ* ພນມ 22:7, 12; ຄພ 49:28; 54:10.
*ຂ* ຄມພ ວຽກງານ.
**113** 1 *ກ* ຄມພ ເຢຊີ.
4 *ກ* ປຖກ 41:50–52; ຄພ 133:30–34. ຄມພ ເອຟະຣາອິມ.
*ຂ* ຄມພ ອຳນາດ.
6 *ກ* ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຂ* ຄພ 45:9. ຄມພ ປ້າຍສັນຍານ.
*ຄ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
8 *ກ* ຄມພ ຊີໂອນ.
*ຂ* ຄພ 82:14.
*ຄ* ຄມພ ສິດທິຂອງອ້າຍກົກ.

ຍາດ; ຄືການກັບຄືນມາສູ່ອຳນາດນັ້ນນຳ
ອີກທີ່ນາງໄດ້ສູນເສຍໄປ.

9 ເຮົາຄວນເຂົ້າໃຈຢ່າງໃດໃນການທີ່
ຊີໂອນໄດ້ຫລຸດໄສ້ທີ່ລ່າມຄໍຂອງນາງອອກ;
ຂໍ້ທີ 2?

10 ເຮົາຄວນເຂົ້າໃຈວ່າ ຜູ້ທີ່ເຫລືອຢູ່ຊຶ່ງ
[ກ]ກະຈັດຈະກາຍໄປ ໄດ້ຮັບຄຳແນະນຳໃຫ້
[ຂ]ກັບໄປຫາພຣະຜູ້ເປັນເຈົ້າ ຈາກບ່ອນທີ່
ພວກເຂົາໄດ້ຕົກ; ຊຶ່ງຖ້າຫາກພວກເຂົາ
ເຮັດ, ພຣະຜູ້ເປັນເຈົ້າສັນຍາວ່າ ຈະກ່າວ
ກັບພວກເຂົາ, ຫລື ມອບການເປີດເຜີຍ
ໃຫ້ແກ່ພວກເຂົາ; ເບິ່ງຂໍ້ທີ 6, 7, ແລະ 8.
ໄສ້ທີ່ລ່າມຄໍຂອງນາງເປັນການສາບແຊ່ງ
ຂອງພຣະເຈົ້າຕໍ່ນາງ, ຫລື ຜູ້ທີ່ເຫລືອຢູ່
ຂອງອິດສະຣາເອນ ໃນສະພາບທີ່ກະຈັດ
ຈະກາຍໄປຂອງພວກເຂົາ ໃນບັນດາຄົນ
ຕ່າງຊາດ.

## ພາກທີ 114

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຟາແວັດ, ລັດມິເຊີຣີ, ວັນທີ 11 ເດືອນເມສາ, 1838.*

*1–2, ຕຳແໜ່ງຂອງສາດສະໜາຈັກທີ່ຄົນບໍ່ຊື່ສັດໄດ້ຮັບຈະຖືກມອບໃຫ້ຄົນອື່ນ.*

1 ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້: ມັນເປັນຄວາມສະຫລຽວ
ສະຫລາດຂອງຜູ້ຮັບໃຊ້ຂອງເຮົາ ເດວິດ
ດັບເບິນຢູ ແພດເຕັນ, ທີ່ລາວຈະເຮັດພາ
ລະກິດທັງໝົດຂອງລາວ ໃຫ້ຮຽບຮ້ອຍ
ໂດຍໄວເທົ່າທີ່ລາວຈະສາມາດເຮັດໄດ້,
ແລະ ໄດ້ຈຳໜ່າຍຈ່າຍແຈກສິນຄ້າຂອງ
ລາວ, ເພື່ອວ່າລາວຈະໄດ້ເຮັດພາລະກິດ
ຢ່າງໜຶ່ງໃຫ້ແກ່ເຮົາໃນລະດູໃບໄມ້ປົ່ງປີ
ຕໍ່ໄປ, ພ້ອມກັບຄົນອື່ນໆ, ແມ່ນແຕ່ສິບ
ສອງຄົນຮວມທັງຕົວລາວ, ໃນການເປັນ
ພະຍານເຖິງນາມຂອງເຮົາ ແລະ ນຳຂ່າວ
ອັນໜ້າຊື່ນຊົມໄປສູ່ທົ່ວໂລກ.

2 ເພາະຕາມຄວາມຈິງແລ້ວ ພຣະຜູ້ເປັນ
ເຈົ້າໄດ້ກ່າວດັ່ງນີ້, ວ່າຕາບໃດທີ່ມີຄົນໃນ
ບັນດາພວກເຈົ້າທີ່ປະຕິເສດນາມຂອງເຮົາ,
ຄົນອື່ນຈະຖືກ [ກ]ແຕ່ງຕັ້ງ [ຂ]ຂຶ້ນແທນພວກ
ເຂົາ ແລະ ຮັບເປັນຝ່າຍອະທິການຂອງ
ພວກເຂົາ. ອາແມນ.

## ພາກທີ 115

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຟາແວັດ, ລັດມິເຊີຣີ, ວັນທີ 26 ເດືອນເມສາ, 1838, ໂດຍການເຮັດໃຫ້ຮູ້ຈັກພຣະປະສົງຂອງພຣະເຈົ້າກ່ຽວ*

10 *ກ* ຄມພ ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ.
*ຂ* ຮສອ 3:4–5; 2 ນຟ 6:11.

**114** 2 *ກ* ຄພ 118:1, 6.
*ຂ* ຄພ 64:40.

*ກັບການສ້າງສາສະຖານທີ່ ແລະ ບ້ານຂອງພຣະຜູ້ເປັນເຈົ້າ. ການເປີດເຜີຍນີ້ແມ່ນເຖິງເຈົ້າໜ້າທີ່ຄວບຄຸມ ແລະ ສະມາຊິກຂອງສາດສະໜາຈັກ.*

*1–4, ພຣະຜູ້ເປັນເຈົ້າໄດ້ຕັ້ງຊື່ສາດສະໜາຈັກຂອງພຣະອົງວ່າ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ; 5–6, ຊີໂອນ ແລະ ສະເຕກຂອງນາງເປັນສະຖານທີ່ປົກປ້ອງ ແລະ ເປັນບ່ອນຫລົບໄພສຳລັບໄພ່ພົນຂອງພຣະເຈົ້າ; 7–16, ໄພ່ພົນຂອງພຣະເຈົ້າຖືກບັນຊາໃຫ້ສ້າງບ້ານຂອງພຣະຜູ້ເປັນເຈົ້າຢູ່ເມືອງຟາແວັດ; 17–19, ໂຈເຊັບ ສະມິດ ຖືຂໍກະແຈຂອງອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ.*

1 ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບພວກເຈົ້າ, ຜູ້ຮັບໃຊ້ຂອງເຮົາ [ກ]ໂຈເຊັບ ສະມິດ, ຜູ້ລູກ, ແລະ ຜູ້ຮັບໃຊ້ຂອງເຮົາ [ຂ]ຊິດນີ ຣິກດອນ ນຳອີກ, ແລະ ຜູ້ຮັບໃຊ້ຂອງເຮົາ [ຄ]ໄຮຣຳ ສະມິດ ນຳອີກ, ແລະ ທີ່ປຶກສາຂອງພວກເຈົ້າຜູ້ໄດ້ຖືກກຳນົດ ແລະ ຈະຖືກກຳນົດໃນພາຍຫລັງ.

2 ແລະ ກັບເຈົ້າຄືກັນ, ຜູ້ຮັບໃຊ້ຂອງເຮົາ [ກ]ເອດເວີດ ພາດທຣິດ, ແລະ ທີ່ປຶກສາຂອງລາວ;

3 ແລະ ກັບຜູ້ຮັບໃຊ້ທີ່ຊື່ສັດຂອງເຮົານຳອີກ ຜູ້ເປັນຂອງສະພາສູງຂອງສາດສະໜາຈັກຂອງເຮົາໃນຊີໂອນ, ເພາະມັນຈະຖືກເອີ້ນເຊັ່ນນັ້ນ, ແລະ ກັບແອວເດີ ແລະ ຜູ້ຄົນທັງຫລາຍຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍຂອງເຮົາ, ທີ່ກະຈັດຈະກາຍກັນຢູ່ທົ່ວໂລກ;

4 ເພາະ [ກ]ສາດສະໜາຈັກຂອງເຮົາຈະຖືກເອີ້ນດັ່ງນັ້ນໃນຍຸກສຸດທ້າຍ, ວ່າ [ຂ]ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.

5 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າທັງຫລາຍວ່າ: ຈົ່ງ [ກ]ລຸກຂຶ້ນ ແລະ ສ່ອງແສງອອກໄປ, ເພື່ອວ່າຄວາມສະຫວ່າງຂອງພວກເຈົ້າຈະເປັນ [ຂ]ທຸງສັນຍານໃຫ້ປະຊາຊາດ;

6 ແລະ ເພື່ອວ່າ [ກ]ການເຕົ້າໂຮມຢູ່ເທິງແຜ່ນດິນ [ຂ]ຊີໂອນ, ແລະ ເທິງ [ຄ]ສະເຕກຂອງນາງ, ຈະເກີດຂຶ້ນເພື່ອການປົກປ້ອງ, ແລະ ເພື່ອເປັນ [ງ]ບ່ອນຫລົບໄພຈາກພະຍຸ, ແລະ ຈາກພຣະພິໂລດເມື່ອມັນຈະ [ຈ]ຖອກເທລົງມາໂດຍສຸດພະລັງເທິງທັງແຜ່ນດິນໂລກ.

7 ໃຫ້ເມືອງ, ຟາແວັດ, ເປັນແຜ່ນດິນ [ກ]ສັກສິດ ແລະ ອຸທິດຖວາຍແກ່ເຮົາ; ແລະ ມັນຈະຖືກເອີ້ນວ່າ ສັກສິດທີ່ສຸດ, ເພາະສະຖານທີ່ ທີ່ພວກເຈົ້າຢືນຢູ່ນັ້ນເປັນບ່ອນສັກສິດ.

8 ສະນັ້ນ, ເຮົາບັນຊາພວກເຈົ້າໃຫ້ [ກ]ສ້າງບ້ານຫລັງໜຶ່ງໃຫ້ແກ່ເຮົາ, ສຳລັບເປັນການເຕົ້າໂຮມຂອງໄພ່ພົນຂອງເຮົາ, ເພື່ອວ່າພວກເຂົາຈະໄດ້ [ຂ]ນະມັດສະການເຮົາ.

**115** 1 *ກ* ຄມພ ສະມິດ, ໂຈເຊັບ, ຜູ້ລູກ.
*ຂ* ຄມພ ຣິກດອນ, ຊິດນີ.
*ຄ* ຄມພ ສະມິດ, ໄຮຣຳ.
2 *ກ* ຄມພ ພາດທຣິດ, ເອດເວີດ.
4 *ກ* 3 ນຟ 27:4–8.
*ຂ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.
5 *ກ* ອຊຢ 60:1–3.
*ຂ* ອຊຢ 11:12. ຄມພ ປ້າຍສັນຍານ.
6 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຂ* ຄມພ ຊີໂອນ.
*ຄ* ຄພ 101:21. ຄມພ ສະເຕກ.
*ງ* ອຊຢ 25:1, 4; ຄພ 45:66–71.
*ຈ* ພນມ 14:10; ຄພ 1:13–14.
7 *ກ* ຄມພ ສັກສິດ, ຄວາມສັກສິດ.
8 *ກ* ຄພ 88:119; 95:8.
*ຂ* ຄມພ ນະມັດສະການ.

9 ແລະ ໃຫ້ມີການເລີ່ມຕົ້ນວຽກງານນີ້, ແລະ ພື້ນຖານ, ແລະ ການຕຽມວຽກງານ, ໃນລະດູຮ້ອນທີ່ຈະມາເຖິງນີ້;

10 ແລະ ໃຫ້ເລີ່ມຕົ້ນການສ້າງໃນວັນທີສີ່ຂອງເດືອນກໍລະກົດທີ່ຈະມາເຖິງນີ້; ແລະ ຈາກເວລານັ້ນ ໃຫ້ຜູ້ຄົນຂອງເຮົາທຳງານຢ່າງພາກພຽນເພື່ອສ້າງບ້ານແດ່ນາມຂອງເຮົາ;

11 ແລະ ປີ [ກ]ໜຶ່ງຈາກວັນນັ້ນ ໃຫ້ພວກເຂົາເລີ່ມຕົ້ນການວາງພື້ນຖານ [ຂ]ບ້ານຂອງເຮົາອີກ.

12 ດັ່ງນັ້ນ ນັບແຕ່ເວລານີ້ໄປ ໃຫ້ພວກເຂົາ ທຳງານຢ່າງພາກພຽນ ຈົນກວ່າ ມັນຈະສຳເລັດ, ຈາກຫີນເສົາເອກນັ້ນຈົນເຖິງຈອມຂອງມັນ, ຈົນວ່າບໍ່ມີບ່ອນໃດເຫລືອຢູ່ທີ່ຍັງບໍ່ສຳເລັດ.

13 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ບໍ່ໃຫ້ ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ທັງບໍ່ໃຫ້ຜູ້ຮັບໃຊ້ຂອງເຮົາ ຊິດນີ, ທັງບໍ່ໃຫ້ຜູ້ຮັບໃຊ້ຂອງເຮົາ ໄຮຣຳ, ເປັນໜີ້ອີກໃນການສ້າງບ້ານແດ່ນາມຂອງເຮົາ;

14 ແຕ່ໃຫ້ບ້ານຖືກສ້າງຂຶ້ນແດ່ນາມຂອງເຮົາ ຕາມ [ກ]ແບບແຜນຊຶ່ງເຮົາຈະສະແດງແກ່ເຂົາເຈົ້າ.

15 ແລະ ຖ້າຫາກຜູ້ຄົນຂອງເຮົາບໍ່ສ້າງມັນຕາມແບບແຜນທີ່ເຮົາໄດ້ສະແດງແກ່ຝ່າຍປະທານຂອງພວກເຂົາ, ເຮົາຈະບໍ່ຍອມຮັບເອົາມັນຈາກມືຂອງພວກເຂົາ.

16 ແຕ່ຖ້າຫາກຜູ້ຄົນຂອງເຮົາສ້າງມັນຕາມແບບແຜນທີ່ເຮົາຈະສະແດງແກ່ຝ່າຍປະທານຂອງພວກເຂົາ, ແມ່ນແຕ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ແລະ ທີ່ປຶກສາຂອງລາວ, ເມື່ອນັ້ນເຮົາຈະຍອມຮັບເອົາມັນຈາກມືຂອງຜູ້ຄົນຂອງເຮົາ.

17 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ມັນເປັນຄວາມປະສົງຂອງເຮົາວ່າເມືອງຟາແວັດຄວນຖືກສ້າງສາຂຶ້ນຢ່າງໄວໂດຍການເຕົ້າໂຮມຂອງໄພ່ພົນຂອງເຮົາ;

18 ແລະ ວ່າ ບ່ອນອື່ນຄວນຖືກກຳນົດໃຫ້ເປັນ [ກ]ສະເຕກໃນພາກພື້ນຕ່າງໆທີ່ອ້ອມຮອບ, ດັ່ງທີ່ມັນຈະຖືກສະແດງໃຫ້ປະຈັກແກ່ຜູ້ຮັບໃຊ້ຂອງເຮົາ, ໂຈເຊັບ, ເປັນບາງຄັ້ງ.

19 ເພາະ ຈົ່ງເບິ່ງ, ເຮົາຈະຢູ່ກັບລາວ, ແລະ ເຮົາຈະຊຳລະລາວໃຫ້ບໍລິສຸດຕໍ່ໜ້າຜູ້ຄົນ; ເພາະເຮົາໄດ້ມອບ [ກ]ຂໍກະແຈຂອງອານາຈັກ ແລະ ການປະຕິບັດສາດສະໜາກິດນີ້ໃຫ້ລາວ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 116

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃກ້ ເຮືອນາຍໄວ້, ໃນສະຖານທີ່ ທີ່ຖືກເອີ້ນວ່າ ສະປຣິງຮຽວ, ເຂດເດວິສ໌, ລັດມີເຊີຣີ, ວັນທີ 19 ເດືອນພຶດສະພາ, 1838.*

11 *ກ* ຄພ 118:5.
*ຂ* ຄພ 124:45–54.
14 *ກ* ຮຣ 8:5;
ຄພ 97:10.
18 *ກ* ຄພ 101:21.
ຄມພ ສະເຕກ.
19 *ກ* ຄມພ ຂໍກະແຈຂອງຖານະປະໂລຫິດ.

1 ສະປຣິງຮຽວ ໄດ້ຖືກຕັ້ງຊື່ [a]ອາດາມ-ອອນໄດ-ອາມັນ ໂດຍພຣະຜູ້ເປັນເຈົ້າ, ເພາະພຣະອົງໄດ້ກ່າວວ່າ ມັນເປັນສະຖານທີ່ ທີ່ [b]ອາດາມຈະມາຢ້ຽມຢາມຜູ້ຄົນຂອງເພິ່ນ, ຫລື [c]ຜູ້ນິຊີວິດຢູ່ຕະຫລອດໄປຈະນັ່ງ, ດັ່ງທີ່ດານີເອນ ຜູ້ເປັນສາດສະດາໄດ້ກ່າວໄວ້.

# ພາກທີ 117

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຟາແວັດ, ລັດມີເຊີຣີ, ວັນທີ 8 ເດືອນກໍລະກົດ, 1838, ກ່ຽວກັບວຽກງານສະເພາະຂອງວິວລຽມ ມາກສ໌, ນິວເອັນ ເຄ ວິດນີ, ແລະ ອໍລີເວີ ກະແຣນເຈີ.*

*1–9, ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າບໍ່ຄວນໂລບສິ່ງຂອງທາງໂລກ, ເພາະ "ຊັບສົມບັດສຳຄັນແນວໃດຕໍ່ພຣະຜູ້ເປັນເຈົ້າ?" 10–16, ພວກເຂົາຄວນປະຖິ້ມຄວາມຄັບແຄບໃນຈິດວິນຍານ, ແລະ ການເສຍສະລະຂອງພວກເຂົາຈະສັກສິດແດ່ພຣະຜູ້ເປັນເຈົ້າ.*

1 ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບຜູ້ຮັບໃຊ້ຂອງເຮົາ ວິວລຽມ ມາກສ໌, ແລະ ກັບຜູ້ຮັບໃຊ້ຂອງເຮົາ ນິວເອັນ ເຄ ວິດນີ ນຳອີກ, ໃຫ້ພວກເຂົາຟ້າວເຮັດທຸລະກິດຂອງພວກເຂົາໃຫ້ຮຽບຮ້ອຍ ແລະ ໃຫ້ເດີນທາງໄປຈາກແຜ່ນດິນເຄີດແລນ, ກ່ອນເຮົາ, ພຣະຜູ້ເປັນເຈົ້າ, ຈະສົ່ງຫິມະມາເທິງແຜ່ນດິນໂລກອີກ.
2 ໃຫ້ພວກເຂົາຕື່ນ, ແລະ ລຸກຂຶ້ນ, ແລະ ອອກມາ, ແລະ ບໍ່ໃຫ້ຢູ່ຕໍ່ໄປດົນນານ, ເພາະເຮົາ, ພຣະຜູ້ເປັນເຈົ້າ, ບັນຊາເລື່ອງນີ້.
3 ສະນັ້ນ, ຖ້າຫາກພວກເຂົາຢູ່ຕໍ່ໄປດົນນານ ມັນຈະບໍ່ດີກັບພວກເຂົາ.
4 ໃຫ້ພວກເຂົາກັບໃຈຈາກບາບທັງໝົດຂອງພວກເຂົາ, ແລະ ຈາກຄວາມມັກໂລບມາກໂລພາທັງໝົດຂອງພວກເຂົາ, ຢູ່ຕໍ່ໜ້າເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ; ເພາະ [a]ຊັບສົມບັດສຳຄັນແນວໃດຕໍ່ເຮົາ? ພຣະຜູ້ເປັນເຈົ້າໄດ້ກ່າວ.
5 ໃຫ້ນຳຊັບສົມບັດຂອງເມືອງເຄີດແລນໄປໃຊ້ [a]ໜີ້, ພຣະຜູ້ເປັນເຈົ້າໄດ້ກ່າວ. ໃຫ້ປ່ອຍມັນໄປ, ພຣະຜູ້ເປັນເຈົ້າໄດ້ກ່າວ, ແລະ ສິ່ງໃດກໍຕາມທີ່ເຫລືອຢູ່, ໃຫ້ມັນເຫລືອຢູ່ໃນມືຂອງພວກເຈົ້າ, ພຣະຜູ້ເປັນເຈົ້າໄດ້ກ່າວ.
6 ເພາະເຮົາບໍ່ໄດ້ມີນົກຢູ່ໃນຟ້າສະຫວັນ, ແລະ ປາໃນທະເລ, ແລະ ສັດສາວາສິ່ງໃນພູຜາປ່າດົງບໍ? ເຮົາບໍ່ໄດ້ສ້າງແຜ່ນດິນໂລກບໍ? ເຮົາບໍ່ໄດ້ຖື [a]ຊາຕາກຳຂອງກອງທັບທັງປວງແຫ່ງປະຊາຊາດ ຂອງແຜ່ນດິນໂລກບໍ?
7 ສະນັ້ນ, ເຮົາຈະບໍ່ເຮັດໃຫ້ສະຖານທີ່ໂດດດ່ຽວ [a]ອອກດອກ ແລະ ບານສະພັ່ງບໍ, ແລະ ອອກຜົນຢ່າງຫລວງຫລາຍບໍ? ພຣະຜູ້ເປັນເຈົ້າໄດ້ກ່າວ.

**116** 1 *ກ* ຄພ 78:15.
ຄມພ ອາດາມ-ອອນໄດ-ອາມັນ.
*ຂ* ຄມພ ອາດາມ.
*ຄ* ດນອ 7:13–14, 22.
**117** 4 *ກ* ຄພ 104:14.
5 *ກ* ຄພ 104:78.
6 *ກ* ກຈກ 17:26;
1 ນຟ 17:36–39.
7 *ກ* ອຊຢ 35:1;
ຄພ 49:24–25.

8 ບໍ່ມີບ່ອນພຽງພໍບໍຢູ່ເທິງພູ [ກ]ອາດາມ-
ອອນໄດ-ອາມັນ, ແລະ ຢູ່ເທິງທົ່ງພຽງ ໂອ
ລາຫາ [ຂ]ໄຊນີຫາ, ຫລື [ຄ]ແຜ່ນດິນບ່ອນ
ອາດາມໄດ້ອາໄສຢູ່, ທີ່ພວກເຈົ້າຈະຕ້ອງ
ໂລບສິ່ງຊຶ່ງເປັນພຽງຍອດດຽວ, ແລະ ລະ
ເລີຍເລື່ອງທີ່ສຳຄັນຫລາຍກວ່ານັ້ນ?
9 ສະນັ້ນ, ຈົ່ງຂຶ້ນມາທີ່ນີ້ຫາແຜ່ນດິນ
ຂອງຜູ້ຄົນຂອງເຮົາ, ແມ່ນແຕ່ຊີໂອນ.
10 ໃຫ້ຜູ້ຮັບໃຊ້ຂອງເຮົາ ວິວລຽມ ມາກສ໌
[ກ]ຊື່ສັດໃນສິ່ງຂອງເລັກໜ້ອຍ, ແລະ ລາວ
ຈະເປັນຜູ້ປົກຄອງໃນສິ່ງຂອງຫລາຍຢ່າງ.
ໃຫ້ລາວຄວບຄຸມໃນທ່າມກາງຜູ້ຄົນຂອງ
ເຮົາໃນເມືອງຟາແວັດ, ແລະ ໃຫ້ລາວໄດ້
ຮັບພອນດ້ວຍພອນຂອງຜູ້ຄົນຂອງເຮົາ.
11 ໃຫ້ຜູ້ຮັບໃຊ້ຂອງເຮົາ ນິວເອັນ ເຄ
ວິດນີ ລະອາຍກ່ຽວກັບກຸ່ມ [ກ]ນີໂກລາຍ
ເຕ ແລະ [ຂ]ຄວາມໜ້າກຽດຊັງລັບໆທັງໝົດ
ຂອງພວກເຂົາ, ແລະ ຄວາມຄັບແຄບໃນ
ຈິດວິນຍານຂອງລາວຢູ່ຕໍ່ໜ້າເຮົາ, ພຣະຜູ້
ເປັນເຈົ້າໄດ້ກ່າວ, ແລະ ຂຶ້ນມາຍັງແຜ່ນດິນ
ອາດາມ-ອອນໄດ-ອາມັນ, ແລະ ເປັນ [ຄ]ອະ
ທິການໃຫ້ຜູ້ຄົນຂອງເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ, ບໍ່ແມ່ນໃນນາມ ແຕ່ໃນການກະ
ທຳ, ພຣະຜູ້ເປັນເຈົ້າໄດ້ກ່າວ.
12 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບພວກ
ເຈົ້າວ່າ ເຮົາຈື່ຈຳຜູ້ຮັບໃຊ້ຂອງເຮົາ [ກ]ອໍລີເວີ
ກະແຣນເຈີ; ຈົ່ງເບິ່ງ, ຕາມຄວາມຈິງແລ້ວ
ເຮົາກ່າວກັບລາວວ່າ ຊື່ຂອງລາວຈະມີຢູ່
ໃນຄວາມຊົງຈຳອັນສັກສິດຈາກລຸ້ນສູ່ລຸ້ນ,
ຕະຫລອດການ ແລະ ຕະຫລອດໄປ, ພຣະ
ຜູ້ເປັນເຈົ້າໄດ້ກ່າວ.
13 ສະນັ້ນ, ໃຫ້ລາວທຳງານຢ່າງພາກ
ພຽນເພື່ອການໄຖ່ຝ່າຍປະທານສູງສຸດຂອງ
ສາດສະໜາຈັກຂອງເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ; ແລະ ເມື່ອລາວລົ້ມ ລາວຈະລຸກ
ຂຶ້ນອີກ, ເພາະ [ກ]ການເສຍສະລະຂອງລາວ
ຈະສັກສິດຕໍ່ເຮົາຫລາຍກວ່າລາຍໄດ້ຂອງ
ລາວ, ພຣະຜູ້ເປັນເຈົ້າໄດ້ກ່າວ.
14 ສະນັ້ນ, ໃຫ້ລາວມາຍັງທີ່ນີ້ຢ່າງໄວ,
ມາຍັງແຜ່ນດິນຊີໂອນ; ແລະ ໃນເວລາອັນ
ເໝາະສົມ ລາວຈະຖືກເຮັດໃຫ້ເປັນພໍ່ຄ້າ
ສຳລັບນາມຂອງເຮົາ, ພຣະຜູ້ເປັນເຈົ້າໄດ້
ກ່າວ, ສຳລັບຜົນປະໂຫຍດຂອງຜູ້ຄົນຂອງ
ເຮົາ.
15 ສະນັ້ນ ຢ່າໃຫ້ຄົນໃດດູໝິ່ນຜູ້ຮັບ
ໃຊ້ຂອງເຮົາ ອໍລີເວີ ກະແຣນເຈີ, ແຕ່ໃຫ້
ພອນຂອງຜູ້ຄົນຂອງເຮົາສະຖິດຢູ່ກັບລາວ
ຕະຫລອດການ ແລະ ຕະຫລອດໄປ.
16 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າ, ໃຫ້ຜູ້ຮັບໃຊ້
ຂອງເຮົາທັງໝົດໃນ ແຜ່ນດິນເຄີດແລນ
ລະນຶກເຖິງພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຂົາ, ແລະ ບ້ານຂອງເຮົາ
ນຳອີກ, ເພື່ອຮັກສາ ແລະ ປ້ອງກັນມັນໄວ້
ໃຫ້ສັກສິດ, ແລະ ເພື່ອຂວ້ຳໂຕະຂອງພວກ
ຮັບແລກປ່ຽນເງິນຕາໃນເວລາອັນເໝາະ
ສົມຂອງເຮົາເອງ, ພຣະຜູ້ເປັນເຈົ້າກ່າວໄດ້.
ແມ່ນເປັນດັ່ງນັ້ນ. ອາແມນ.

---

8 *ກ* ຄພ 116.
ຄມພ ອາດາມ-ອອນໄດ-ອາມັນ.
*ຂ* ອຣຣ 3:13.
*ຄ* ຄມພ ເອເດນ.
10 *ກ* ມທ 25:23.
11 *ກ* ພນມ 2:6, 15.
*ຂ* ຄມພ ການມົ້ວສຸມລັບ.
*ຄ* ຄມພ ອະທິການ.
12 *ກ* ອສ ຕົວແທນຜູ້ທີ່ສາດສະດາໄດ້ປະໄວ້ ເພື່ອໃຫ້ຈັດການກັບພາລະກິດຂອງເພິ່ນຢູ່ໃນເມືອງເຄີດແລນ.
13 *ກ* ຄມພ ເສຍສະລະ, ການເສຍສະລະ.

# ພາກທີ 118

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຟາແວັດ, ລັດມີເຊີຣີ, ວັນທີ 8 ເດືອນກໍລະກົດ, 1838, ໃນການຕອບຕໍ່ຄຳອ້ອນວອນທີ່ວ່າ, "ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງສະແດງພຣະປະສົງຂອງພຣະອົງແກ່ພວກຂ້າພຣະອົງກ່ຽວກັບອັກຄະສາວົກສິບສອງດ້ວຍເທີ້ນ."*

*1–3, ພຣະຜູ້ເປັນເຈົ້າຈະຈັດຫາໃຫ້ຄອບຄົວຂອງອັກຄະສາວົກສິບສອງ; 4–6, ຕຳແໜ່ງວ່າງໃນສະພາອັກຄະສາວົກສິບສອງຖືກບັນຈຸໃຫ້ເຕັມ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວ ດັ່ງ ນີ້: ໃຫ້ຈັດກອງປະ ຊຸມໃຫຍ່ໂດຍທັນທີ; ໃຫ້ຈັດຕັ້ງອັກຄະສາວົກ ສິບສອງ; ແລະ ໃຫ້ກຳນົດຊາຍບາງຄົນ [ກ]ເຂົ້າແທນທີ່ຄົນທີ່ຕົກໄປ.

2 ໃຫ້ ຜູ້ຮັບ ໃຊ້ຂອງ ເຮົາ [ກ]ທອມມັສ ຄົງຢູ່ຕໍ່ໄປຊົ່ວໄລຍະໜຶ່ງໃນແຜ່ນດິນຊີໂອນ, ເພື່ອປະກາດຄຳຂອງເຮົາ.

3 ໃຫ້ຜູ້ທີ່ເຫລືອຢູ່ສັ່ງສອນຕໍ່ໄປນັບຕັ້ງແຕ່ຊົ່ວໂມງນັ້ນ, ແລະ ຖ້າຫາກພວກເຂົາຈະເຮັດການນີ້ດ້ວຍຄວາມຕ່ຳຕ້ອຍໃນໃຈ, ດ້ວຍຄວາມອ່ອນໂຍນ ແລະ [ກ]ຖ່ອມຕົວ, ແລະ ດ້ວຍ [ຂ]ຄວາມອົດກັ້ນ, ແລ້ວເຮົາ, ພຣະຜູ້ເປັນເຈົ້າ, ຈະໃຫ້ຄຳສັນຍາແກ່ພວກເຂົາວ່າ ເຮົາຈະຈັດຫາໃຫ້ຄອບຄົວຂອງພວກເຂົາ; ແລະ ປະຕູທີ່ມີປະສິດທິພາບຈະເປີດໄວ້ໃຫ້ພວກເຂົາ, ນັບແຕ່ນີ້ເປັນຕົ້ນໄປ.

4 ແລະ ລະດູໃບໄມ້ປົ່ງໜ້ານີ້ ໃຫ້ພວກເຂົາອອກເດີນທາງຂ້າມນ້ຳອັນກວ້າງໃຫຍ່, ແລະ ຢູ່ທີ່ນັ້ນ ໃຫ້ປ່າວປະກາດພຣະກິດຕິຄຸນຂອງເຮົາ, ຄວາມສົມບູນຂອງມັນ, ແລະ ກ່າວເປັນພະຍານເຖິງນາມຂອງເຮົາ.

5 ໃຫ້ພວກເຂົາໄປຈາກໄພ່ພົນຂອງເຮົາໃນເມືອງຟາແວັດ, ໃນວັນທີຊາວຫົກຂອງເດືອນເມສາໜ້າ, ຈາກບ່ອນທີ່ຈະສ້າງບ້ານຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

6 ໃຫ້ຜູ້ຮັບ ໃຊ້ຂອງ ເຮົາ ຈອນ ເທເລີ, ແລະ ຜູ້ຮັບໃຊ້ຂອງເຮົາ ຈອນ ອີ ເພຈ໌ ນຳອີກ, ແລະ ຜູ້ຮັບ ໃຊ້ຂອງ ເຮົາ ວິວເຜີດ ວູດຣັບ ນຳອີກ, ແລະ ຜູ້ຮັບໃຊ້ຂອງເຮົາ ວິວເລີດ ຣິເຈີສ໌ ນຳອີກ, ຖືກກຳນົດສູ່ຕຳແໜ່ງຂອງຄົນທີ່ຕົກໄປ, ແລະ ໃຫ້ແຈ້ງການກຳນົດຂອງພວກເຂົານັ້ນຢ່າງເປັນທາງການ.

# ພາກທີ 119

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຟາແວັດ, ລັດມີເຊີຣີ, ວັນທີ 8 ເດືອນກໍລະກົດ, 1838, ໃນການຕອບຕໍ່ຄຳອ້ອນວອນຂອງເພິ່ນທີ່ວ່າ: "ໂອ້ ພຣະຜູ້ເປັນເຈົ້າ! ຂໍຈົ່ງສະແດງແກ່ຜູ້ຮັບໃຊ້ຂອງພຣະອົງວ່າ ພຣະອົງຮຽກຮ້ອງເອົາຊັບສິນ*

**118** 1 *ກ* ກຈກ 1:13, 16–17, 22–26.
2 *ກ* ຄມພ ມາສ໌, ທອມມັສ ບີ.
3 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຂ* ຄມພ ອົດທົນ, ຄວາມອົດທົນ.

*ຂອງຜູ້ຄົນຂອງພຣະອົງຫລາຍເທົ່າໃດສຳລັບສ່ວນສິບ." ກົດສ່ວນສິບ, ຕາມທີ່ເຂົ້າໃຈກັນໃນວັນເວລານີ້, ບໍ່ໄດ້ຖືກມອບໃຫ້ແກ່ສາດສະໜາຈັກກ່ອນການເປີດເຜີຍຄັ້ງນີ້. ຄຳວ່າສ່ວນສິບ ໃນຄຳອະທິຖານທີ່ຫາກໍອ້າງເຖິງ ແລະ ໃນການເປີດເຜີຍກ່ອນໜ້ານີ້ (64:23; 85:3; 97:11) ບໍ່ໄດ້ໝາຍເຖິງໜຶ່ງສ່ວນສິບເທົ່ານັ້ນ, ແຕ່ເປັນເຄື່ອງບູຊາທັງປວງດ້ວຍຄວາມເຕັມໃຈນຳອີກ, ຫລື ເປັນການບໍລິຈາກ, ໃຫ້ແກ່ເງິນທຶນຂອງສາດສະໜາຈັກ. ກ່ອນໜ້ານີ້ພຣະຜູ້ເປັນເຈົ້າໄດ້ມອບກົດແຫ່ງການອຸທິດຖວາຍ ແລະ ສິ່ງທີ່ຢູ່ໃນຄວາມພິທັກຮັກສາຊຶ່ງເປັນຊັບສິນໃຫ້ແກ່ສາດສະໜາຈັກ, ຊຶ່ງສະມາຊິກ (ໂດຍສະເພາະພວກແອວເດີທີ່ເປັນຜູ້ນຳ) ໃຫ້ເຂົ້າຢູ່ພາຍໃຕ້ກົດນັ້ນ ໂດຍພັນທະສັນຍາ ຊຶ່ງຄວນເປັນພັນທະສັນຍາອັນເປັນນິດ. ເພາະຄວາມລົ້ມເຫລວຂອງຫລາຍຄົນທີ່ບໍ່ສາມາດຮັກສາພັນທະສັນຍານັ້ນ, ພຣະຜູ້ເປັນເຈົ້າຈຶ່ງຖອນກົດນີ້ອອກໄປຊົ່ວໄລຍະໜຶ່ງ ແລະ ໄດ້ປະທານກົດສ່ວນສິບໃຫ້ທົ່ວທັງສາດສະໜາຈັກແທນ. ສາດສະດາໄດ້ທູນຖາມພຣະຜູ້ເປັນເຈົ້າວ່າ ພຣະອົງຕ້ອງການຊັບສິນຂອງພວກເຂົາຫລາຍປານໃດ ເພື່ອຈຸດປະສົງອັນສັກສິດ. ຄຳຕອບກໍຄືການເປີດເຜີຍຄັ້ງນີ້.*

*1–5, ໄພ່ພົນຂອງພຣະເຈົ້າຕ້ອງຈ່າຍຊັບສິນທີ່ເຫລືອໃຊ້ຂອງພວກເຂົາ ແລະ ຈາກນັ້ນມອບໃຫ້, ເປັນສ່ວນສິບ, ໜຶ່ງສ່ວນສິບຂອງຜົນປະໂຫຍດຂອງພວກເຂົາທຸກໆປີ 6–7, ຫລັກການເຊັ່ນນີ້ຈະຊຳລະແຜ່ນດິນຊີໂອນໃຫ້ບໍລິສຸດ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຮົາຮຽກຮ້ອງໃຫ້ນຳຊັບສິນທັງໝົດທີ່ [ກ]ເຫລືອໃຊ້ຂອງພວກເຂົາມາໄວ້ໃນມືຂອງອະທິການຂອງສາດສະໜາຈັກຂອງເຮົາໃນຊີໂອນ,

2 ເພື່ອການສ້າງ [ກ]ບ້ານຂອງເຮົາ, ແລະ ເພື່ອການວາງຮາກຖານຂອງຊີໂອນ ແລະ ເພື່ອຖານະປະໂລຫິດ, ແລະ ເພື່ອໜີ້ສິນຂອງຝ່າຍປະທານສູງສຸດຂອງສາດສະໜາຈັກຂອງເຮົາ.

3 ແລະ ນີ້ຈະເປັນການເລີ່ມຕົ້ນການເກັບ [ກ]ສ່ວນສິບຈາກຜູ້ຄົນຂອງເຮົາ.

4 ແລະ ຫລັງຈາກນັ້ນ, ຄົນທີ່ເຮົາເກັບສ່ວນສິບດັ່ງນີ້ຈະຈ່າຍໜຶ່ງສ່ວນສິບຂອງລາຍໄດ້ທັງໝົດຂອງພວກເຂົາທຸກໆປີ; ແລະ ນີ້ຈະເປັນກົດຖາວອນສຳລັບພວກເຂົາຕະຫລອດການ, ເພື່ອຖານະປະໂລຫິດສັກສິດຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

5 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຫດການຈະບັງເກີດຂຶ້ນຄື ຜູ້ຄົນທັງຫລາຍທີ່ມາເຕົ້າໂຮມກັນໃນແຜ່ນດິນ [ກ]ຊີໂອນຈະຕ້ອງຈ່າຍສ່ວນສິບຂອງຊັບສິນທີ່ເຫລືອໃຊ້ຂອງພວກເຂົາ, ແລະ ຈະຍຶດຖືກົດນີ້, ຖ້າບໍ່ດັ່ງນັ້ນ ພວກເຂົາຈະຖືກພົບວ່າບໍ່ມີຄ່າຄວນທີ່ຈະຢູ່ໃນບັນດາພວກເຈົ້າ.

6 ແລະ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກຜູ້ຄົນຂອງເຮົາບໍ່ຍຶດຖືກົດນີ້, ເພື່ອຮັກສາມັນໄວ້ໃຫ້ສັກສິດ, ແລະ ໂດຍກົດນີ້ຊຳລະແຜ່ນດິນ [ກ]ຊີໂອນໃຫ້ບໍລິສຸດຕໍ່ເຮົາ, ເພື່ອຂໍ້ກຳນົດ ແລະ ການພິພາກສາຂອງເຮົາ ຈະຖືກຮັກສາໃນທີ່ນັ້ນ, ເພື່ອມັນຈະສັກສິດທີ່ສຸດ, ຈົ່ງເບິ່ງ, ຕາມຄວາມຈິງແລ້ວ

**119** 1 *ກ* ຄພ 42:33–34, 55; 51:13; 82:17–19.
2 *ກ* ຄພ 115:8.
3 *ກ* ມລກ 3:8–12; ຄພ 64:23. ຄມພ ສ່ວນສິບ, ເງິນສ່ວນສິບ.
5 *ກ* ຄພ 57:2–3.
6 *ກ* ຄມພ ຊີໂອນ.

ເຮົາກ່າວກັບພວກເຈົ້າວ່າ ມັນຈະບໍ່ເປັນແຜ່ນດິນຊີໂອນສຳລັບພວກເຈົ້າ.

7 ແລະ ນີ້ ຈະ ເປັນ ແບບ ຢ່າງ ໃຫ້ ແກ່ [ກ]ສະເຕກທັງໝົດຂອງຊີໂອນ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 120

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຟາແວັດ, ລັດມິເຊີຣີ, ວັນທີ 8 ເດືອນກໍລະກົດ, 1838, ໂດຍການເຮັດໃຫ້ເປັນທີ່ຮູ້ຈັກເຖິງການຈັດການກັບຊັບສິນທີ່ຈ່າຍເປັນສ່ວນສິບ ດັ່ງທີ່ໄດ້ກ່າວເຖິງໃນການເປີດເຜີຍກ່ອນໜ້ານີ້, ພາກທີ 119.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ບັດນີ້ເວລາໄດ້ມາເຖິງແລ້ວ, ທີ່ຈະຈັດການກັບ [ກ]ສິ່ງນີ້ໂດຍສະພາ, ຊຶ່ງປະກອບດ້ວຍຝ່າຍປະທານສູງສຸດຂອງສາດສະໜາຈັກຂອງເຮົາ, ແລະ ໂດຍຝ່າຍອະທິການ ແລະ ສະພາຂອງລາວ, ແລະ ໂດຍສະພາສູງຂອງເຮົາ; ແລະ ໂດຍສຸລະສຽງຂອງເຮົາເອງເຖິງພວກເຂົາ, ພຣະຜູ້ເປັນເຈົ້າໄດ້ກ່າວ. ແມ່ນເປັນດັ່ງນັ້ນ. ອາແມນ.

# ພາກທີ 121

*ຄຳອະທິຖານ ແລະ ຄຳທຳນາຍ ຊຶ່ງຂຽນໂດຍໂຈເຊັບ ສະມິດ ຜູ້ເປັນສາດສະດາ ຢູ່ໃນສານເຖິງສາດສະໜາຈັກ ໃນຂະນະທີ່ເພິ່ນຢູ່ໃນຄຸກຢູ່ເມືອງລີເບີຕີ, ລັດມິເຊີຣີ, ລົງວັນທີ 20 ເດືອນມີນາ, 1839. ສາດສະດາ ແລະ ໝູ່ເພື່ອນຫລາຍຄົນໄດ້ຖືກຈຳຄຸກເປັນເວລາຫລາຍເດືອນ. ຄຳຂໍຮ້ອງ ແລະ ຄຳອຸທອນຂອງພວກເພິ່ນເຖິງເຈົ້າໜ້າທີ່ບໍລິຫານງານ ແລະ ຕຸລາການບໍ່ສາມາດຊ່ວຍເຫລືອພວກເພິ່ນໄດ້.*

*1–6, ສາດສະດາອ້ອນວອນຕໍ່ພຣະຜູ້ເປັນເຈົ້າແທນໄພ່ພົນຂອງພຣະເຈົ້າທີ່ທຸກທໍລະມານ; 7–10, ພຣະຜູ້ເປັນເຈົ້າກ່າວໃຫ້ຄວາມສະຫງົບສຸກແກ່ເພິ່ນ; 11–17, ຄົນທີ່ຖືກສາບແຊ່ງຄືທຸກຄົນເຫລົ່ານັ້ນທີ່ໄດ້ປ່າວຮ້ອງເຖິງການລ່ວງລະເມີດເທັດຕໍ່ຕ້ານຜູ້ຄົນຂອງພຣະຜູ້ເປັນເຈົ້າ; 18–25, ພວກເຂົາຈະບໍ່ມີສິດໃນຖານະປະໂລຫິດ ແລະ ຈະອັບປະໂຫຍດ; 26–32, ການເປີດເຜີຍອັນຮຸ່ງໂລດສັນຍາກັບຜູ້ທີ່ອົດທົນຢ່າງກ້າຫານ; 33–40, ເປັນຫຍັງຫລາຍຄົນໄດ້ຖືກເອີ້ນ ແລະ ໜ້ອຍຄົນໄດ້ຖືກເລືອກ; 41–46, ຖານະປະໂລຫິດຄວນຖືກໃຊ້ພຽງແຕ່ໃນຄວາມຊອບທຳເທົ່ານັ້ນ.*

1 ໂອ້ ພຣະອົງເຈົ້າ, ພຣະອົງຊົງປະທັບຢູ່ບ່ອນໃດ? ແລະ ສາລາທີ່ປົກປິດ [ກ]ບ່ອນລີ້ຂອງພຣະອົງຢູ່ບ່ອນໃດ?

7 *ກ* ຄມພ ສະເຕກ.

**120** 1 *ກ* ອສ ເງິນສ່ວນສິບ.

**121** 1 *ກ* ພສສ 13:1–2; 102:1–2.

2 ອີກດົນ [ກ]ປານໃດທີ່ພຣະຫັດຂອງພຣະ
ອົງຈະຢັ້ງໄວ້, ແລະ ພຣະເນດຂອງພຣະ
ອົງ, ແທ້ຈິງແລ້ວ ພຣະເນດອັນບໍລິສຸດຂອງ
ພຣະອົງ, ຈາກສະຫວັນນິລັນດອນຈະເຫັນ
ການກະທຳຜິດຕໍ່ຜູ້ຄົນຂອງພຣະອົງ ແລະ
ຜູ້ຮັບໃຊ້ຂອງພຣະອົງ, ແລະ ພຣະກັນ
ຂອງພຣະອົງຈະໄດ້ຍິນສຽງຮ້ອງຂອງພວກ
ເຂົາ?
3 ແທ້ຈິງແລ້ວ, ໂອ້ ພຣະຜູ້ເປັນເຈົ້າ, ອີກ
ດົນ [ກ]ປານໃດທີ່ພວກເຂົາຈະທົນຮັບເອົາ
ການກະທຳຜິດ ແລະ ການກົດຂີ່ຂົ່ມເຫັງ
ທີ່ຜິດກົດໝາຍເຫລົ່ານີ້, ກ່ອນທີ່ພຣະໄທ
ຂອງພຣະອົງຈະອ່ອນລົງຕໍ່ພວກເຂົາ, ແລະ
ພຣະອຸທອນຂອງພຣະອົງຈະເກີດມີຄວາມ
ເມດຕາສົງສານພວກເຂົາ?
4 ໂອ້ ອົງພຣະຜູ້ເປັນເຈົ້າ [ກ]ຜູ້ຊົງລິດ
ອຳນາດຍິ່ງໃຫຍ່, ພຣະຜູ້ສ້າງຟ້າສະຫວັນ,
ແຜ່ນດິນໂລກ, ແລະ ທ້ອງທະເລ, ແລະ
ທຸກສິ່ງທັງປວງທີ່ຢູ່ໃນນັ້ນ, ແລະ ຜູ້ຄຸ້ມຄອງ
ແລະ ບັງຄັບບັນຊາມານ, ແລະ ອຳນາດ
ການປົກຄອງອັນມືດມົນ ແລະ ດັບແສງ
ຂອງຊີອອນ—ຂໍຈົ່ງຍື່ນພຣະຫັດຂອງພຣະ
ອົງອອກໄປ; ຂໍໃຫ້ພຣະເນດຂອງພຣະອົງ
ຈົ່ງສຽບແທງ; ຂໍໃຫ້ສາລາຂອງພຣະອົງຈົ່ງ
ຖືກຍົກອອກໄປ; ຂໍໃຫ້ [ຂ]ບ່ອນເຊື່ອງຊ້ອນ
ຂອງພຣະອົງບໍ່ຖືກປົກປິດອີກຕໍ່ໄປ; ຂໍໃຫ້
ພຣະກັນຂອງພຣະອົງຈົ່ງຮັບຟັງ; ໃຫ້ຂໍ
ພຣະໄທຂອງພຣະອົງຈົ່ງອ່ອນລົງ, ແລະ
ຂໍໃຫ້ພຣະອຸທອນຂອງພຣະອົງຈົ່ງເກີດມີ
ຄວາມເມດຕາສົງສານພວກຂ້າພຣະອົງ.
5 ຂໍໃຫ້ພຣະພິໂລດຂອງພຣະອົງເກີດ
ກັບສັດຕູຂອງພວກຂ້າພຣະອົງ; ແລະ, ໃນ
ຄວາມໂມໂຫຂອງພຣະໄທຂອງພຣະອົງ,
ດ້ວຍດາບຂອງພຣະອົງເພື່ອ [ກ]ແກ້ແຄ້ນໃຫ້
ພວກຂ້າພຣະອົງເນື່ອງດ້ວຍການກະທຳ
ຜິດຕໍ່ພວກຂ້າພຣະອົງ.
6 ຈົ່ງລະນຶກເຖິງໄພ່ພົນຂອງພຣະເຈົ້າ
ທີ່ທຸກທໍລະມານ, ໂອ້ ພຣະເຈົ້າຂອງພວກ
ຂ້າພຣະອົງ; ແລະ ຜູ້ຮັບໃຊ້ຂອງພຣະອົງ
ຈະປິຕິຍິນດີໃນພຣະນາມຂອງພຣະອົງ
ຕະຫລອດການ.
7 ລູກເອີຍ, ສັນຕິສຸກຈົ່ງມີແກ່ຈິດວິນ
ຍານຂອງເຈົ້າ; [ກ]ຄວາມຍາກລຳບາກຂອງ
ເຈົ້າ ແລະ ຄວາມທຸກທໍລະມານຂອງເຈົ້າ
ຈະເປັນຢູ່ພຽງຊົ່ວຄາວ;
8 ແລະ ຈາກນັ້ນ, ຖ້າຫາກເຈົ້າ [ກ]ອົດທົນ
ມັນໄດ້ດີ, ພຣະເຈົ້າຈະຍົກເຈົ້າຂຶ້ນສູ່ເບື້ອງ
ບົນ; ເຈົ້າຈະມີໄຊເໜືອສັດຕູທັງໝົດຂອງ
ເຈົ້າ.
9 [ກ]ໝູ່ເພື່ອນຂອງເຈົ້າຢືນຄຽງຂ້າງເຈົ້າ,
ແລະ ພວກເຂົາຈະທັກທາຍເຈົ້າດ້ວຍຫົວ
ໃຈອັນອົບອຸ່ນ ແລະ ດ້ວຍມືອັນເປັນມິດ.
10 ເຈົ້າຍັງບໍ່ໄດ້ເປັນດັ່ງ [ກ]ໂຢບ, ໝູ່ເພື່ອນ
ຂອງເຈົ້າບໍ່ໄດ້ໂຕ້ແຍ້ງເຈົ້າ, ທັງບໍ່ໄດ້ກ່າວ
ຫາເຈົ້າເລື່ອງການລ່ວງລະເມີດ, ດັ່ງທີ່ພວກ
ເຂົາໄດ້ເຮັດກັບໂຢບ.
11 ແລະ ຄົນທີ່ກ່າວຫາເຈົ້າເລື່ອງການ
ລ່ວງລະເມີດ, ຄວາມຫວັງຂອງພວກເຂົາ
ຈະໂມຄະ, ແລະ ຄວາມຄາດໝາຍຂອງ
ພວກເຂົາຈະລະລາຍໄປດັ່ງ [ກ]ນ້ຳຄ້າງຖືກ
ແສງແດດເຜົາໃນຍາມເຊົ້າ;
12 ແລະ ພຣະເຈົ້າລົງລາຍພຣະຫັດ

2 ກ ຮບກ 1:2.
3 ກ ຄພ 109:49.
4 ກ ຄມພ ອົງຊົງລິດອຳນາດຍິ່ງໃຫຍ່.
ຂ ຄພ 123:6.
5 ກ ລກ 18:7–8.
7 ກ ຄມພ ຍາກລຳບາກ, ຄວາມຍາກລຳບາກ.
8 ກ 1 ປຕ 2:19–23. ຄມພ ອົດທົນ, ຄວາມອົດທົນ.
9 ກ ຄພ 122:3.
10 ກ ຄມພ ໂຢບ.
11 ກ ອພຍ 16:14.

ແລະ ຜະນຶກ ໄວ້ ເພື່ອປ່ຽນ [ກ]ເວລາ ແລະ
ລະດູການ, ແລະ ເພື່ອເຮັດໃຫ້ຈິດໃຈຂອງ
ພວກເຂົາບອດນຳອີກ, ເພື່ອວ່າພວກເຂົາ
ຈະບໍ່ເຂົ້າໃຈວຽກງານອັນໜ້າອັດສະຈັນໃຈ
ຂອງພຣະອົງ; ເພື່ອວ່າພຣະອົງຈະພິສູດ
ພວກເຂົານຳອີກ ແລະ ຈັບພວກເຂົາໃນກົນ
ອຸບາຍຂອງພວກເຂົາເອງ;
13 ເພາະ ໃຈ ຂອງພວກເຂົາເສື່ອມໂຊມ
ນຳອີກ, ແລະ ສິ່ງທີ່ພວກເຂົາເຕັມໃຈທີ່ຈະ
ນຳມາສູ່ຄົນອື່ນໆ, ແລະ ມັກໃຫ້ຄົນອື່ນທຸກ
ທໍລະມານ, ອາດຈະມາເຖິງຕົວຂອງ [ກ]ພວກ
ເຂົາເອງຢ່າງເຕັມທີ່;
14 ເພື່ອພວກເຂົາຈະຜິດຫວັງນຳອີກ,
ແລະ ຄວາມຫວັງຂອງພວກເຂົາຈະຖືກຕັດ
ອອກ;
15 ແລະ ບໍ່ຫລາຍປີຈາກນີ້, ພວກເຂົາ
ແລະ ລູກຫລານ ຂອງ ພວກ ເຂົາ ຈະ ຖືກ
ກວາດລ້າງໄປຈາກພາຍໃຕ້ຟ້າສະຫວັນ,
ພຣະເຈົ້າກ່າວ, ເພື່ອວ່າຈະບໍ່ມີຈັກຄົນ
ເຫລືອຢູ່ຂ້າງກຳແພງ.
16 ການສາບແຊ່ງຈະເກີດກັບທຸກຄົນ
ທີ່ຍົກສົ້ນຕີນໃຫ້ຜູ້ທີ່ [ກ]ເຈີມໄວ້ຂອງເຮົາ,
ພຣະຜູ້ເປັນເຈົ້າໄດ້ກ່າວ, ແລະ ປ່າວຮ້ອງ
ວ່າພວກເຂົາເຮັດ [ຂ]ບາບເມື່ອພວກເຂົາບໍ່
ໄດ້ເຮັດບາບຢູ່ຕໍ່ໜ້າເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ, ແຕ່ໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍ
ຕາຂອງເຮົາ, ແລະ ຊຶ່ງເຮົາໄດ້ບັນຊາພວກ
ເຂົາ.
17 ແຕ່ຄົນທີ່ປ່າວຮ້ອງການລ່ວງລະເມີດ
ເຮັດເຊັ່ນນັ້ນ ເພາະພວກເຂົາເປັນຄົນຮັບ
ໃຊ້ບາບ, ແລະ ພວກເຂົາເອງເປັນ [ກ]ລູກ
ຫລານຂອງຄວາມບໍ່ເຊື່ອຟັງ.
18 ແລະ ຄົນທີ່ສາບານເທັດໃສ່ຜູ້ຮັບ
ໃຊ້ຂອງເຮົາ, ເພື່ອວ່າພວກເຂົາຈະໄດ້ພາ
ພວກເຂົາລົງໄປສູ່ຄວາມເປັນທາດ ແລະ
ຄວາມຕາຍ—
19 ວິບັດແກ່ພວກເຂົາ; ເພາະພວກເຂົາ
ໄດ້ [ກ]ເຮັດຜິດຕໍ່ເດັກນ້ອຍຂອງເຮົາ ພວກ
ເຂົາຈະຖືກຕັດຈາກ [ຂ]ພິທີການຂອງບ້ານ
ຂອງເຮົາ.
20 [ກ]ກະຕ່າ ຂອງ ພວກ ເຂົາ ຈະ ບໍ່ ເຕັມ,
ບ້ານເຮືອນຂອງພວກເຂົາ ແລະ ເລົ້າຂອງ
ພວກເຂົາຈະພິນາດ, ແລະ ພວກເຂົາເອງ
ຈະຖືກດູໝິ່ນໂດຍຄົນທີ່ເວົ້າຍ້ອງຍໍພວກ
ເຂົາ.
21 ພວກເຂົາຈະບໍ່ມີສິດໃນ [ກ]ຖານະປະ
ໂລຫິດ, ທັງລູກຫລານຂອງພວກເຂົາຕໍ່
ຈາກພວກເຂົາຈາກລຸ້ນສູ່ລຸ້ນ ກໍບໍ່ມີ.
22 ເປັນສິ່ງ [ກ]ດີກວ່າຖ້າຫາກພວກເຂົາ
ຖືກເອົາຫີນໂມ້ກ້ອນໃຫຍ່ຜູກຄໍ ແລະ ຈົມ
ລົງໃນຄວາມເລິກຂອງທະເລ.
23 ວິບັດແກ່ຄົນທັງປວງທີ່ເຮັດໃຫ້ຜູ້ຄົນ
ຂອງເຮົາເປັນທຸກ, ແລະ ຂັບໄລ່, ແລະ
ຄາດຕະກຳ, ແລະ ເປັນພະຍານຕໍ່ຕ້ານ
ພວກເຂົາ, ຈອມໂຍທາໄດ້ກ່າວ; [ກ]ລຸ້ນໜຶ່ງ
ຂອງເຫລົ່າງູພິດຮ້າຍຈະໜີບໍ່ພົ້ນຄວາມອັບ
ປະໂຫຍດຂອງນະລົກ.
24 ຈົ່ງເບິ່ງ, ຕາຂອງເຮົາ [ກ]ເຫັນ ແລະ ຮູ້
ຈັກວຽກງານທັງໝົດຂອງພວກເຂົາ, ແລະ
ເຮົາໄດ້ເກັບ [ຂ]ການພິພາກສາອັນວ່ອງໄວ

12ກ ດນອ 2:21.
13ກ ສພສ 28:10; 1 ນຟ 14:3.
16ກ 1 ຊມອ 26:9; ພສສ 105:15.
ຂ 2 ນຟ 15:20; ມຣນ 7:14, 18.
17ກ ອຟຊ 5:6.
19ກ ມທ 18:6. ຄມພ ຂຸ່ນເຄືອງໃຈ.
ຂ ຄມພ ພິທີການ.
20ກ ພບຍ 28:15–20.
21ກ ຄມພ ຖານະປະໂລຫິດ.
22ກ ມທ 18:6; ຄພ 54:5.
23ກ ມທ 12:34.
24ກ ຄມພ ຮອບຮູ້ທຸກຢ່າງ.
ຂ ຣລມ 8:25. ຄມພ ພິພາກສາ, ການພິພາກສາ, ຜູ້ພິພາກສາ.

ໄວ້ໃນລະດູການຂອງມັນ, ໃຫ້ພວກເຂົາ
ທຸກຄົນ;
25 ເພາະມີ [ກ]ເວລາກຳນົດໄວ້ໃຫ້ມະນຸດ
ທຸກຄົນ, ຕາມທີ່ [ຂ]ວຽກງານຂອງເຂົາ ຈະ
ເປັນ.
26 ພຣະເຈົ້າຈະມອບ [ກ]ຄວາມຮູ້ໃຫ້ແກ່
ເຈົ້າໂດຍ [ຂ]ພຣະວິນຍານສັກສິດຂອງພຣະ
ອົງ, ແທ້ຈິງແລ້ວ, ໂດຍ [ຄ]ຂອງປະທານແຫ່ງ
ພຣະວິນຍານບໍລິສຸດທີ່ບໍ່ອາດຈະກ່າວເຖິງ
ໄດ້, ທີ່ຍັງບໍ່ຖືກເປີດເຜີຍເທື່ອນັບຕັ້ງແຕ່
ໂລກເປັນມາຈົນເຖິງບັດນີ້;
27 ຊຶ່ງບັນພຣະບຸລຸດຂອງພວກເຮົາໄດ້
ຄອຍຖ້າຢ່າງກະຕືລືລົ້ນທີ່ຈະໄດ້ຮັບການ
ເປີດເຜີຍໃນເທື່ອສຸດທ້າຍ, ຊຶ່ງຄວາມຄິດ
ຂອງພວກເຂົາໄດ້ຊີ້ນຳໂດຍເຫລົ່າທູດ, ຊຶ່ງ
ເກັບໄວ້ລໍຄວາມສົມບູນແຫ່ງລັດສະໝີພາບ
ຂອງພວກເຂົາ;
28 ເວລາຈະມາເຖິງໃນເວລານັ້ນເມື່ອ
[ກ]ບໍ່ມີສິ່ງໃດຈະຖືກຢັບຢັ້ງໄວ້, ບໍ່ວ່າຈະມີ
ພຣະເຈົ້າອົງດຽວ ຫລື [ຂ]ຫລາຍອົງກໍຕາມ,
ສິ່ງເຫລົ່ານັ້ນຈະຖືກສະແດງໃຫ້ປະຈັກ.
29 ພຣະບັນລັງ ແລະ ການຄອບຄອງ,
ເຂດປົກຄອງ ແລະ ອຳນາດທັງໝົດ, ຈະ
ຖືກ [ກ]ເປີດເຜີຍ ແລະ ຖືກມອບໃຫ້ແກ່ທຸກ
ຄົນທີ່ອົດທົນຢ່າງກ້າຫານເພື່ອພຣະກິດຕິ
ຄຸນຂອງພຣະເຢຊູຄຣິດ.
30 ແລະ ພ້ອມນີ້, ຖ້າຫາກມີ [ກ]ຂອບເຂດ
ກຳນົດໄວ້ໃຫ້ແກ່ຟ້າສະຫວັນ ຫລື ທ້ອງ
ທະເລ, ຫລື ແກ່ແຜ່ນດິນແຫ້ງ, ຫລື ແກ່ດວງ
ຕາເວັນ, ດວງເດືອນ, ຫລື ດວງດາວ—
31 ເວລາທັງໝົດຂອງການໝູນວຽນ
ຂອງມັນ, ວັນ, ເດືອນ, ແລະ ປີທັງໝົດທີ່
ໄດ້ກຳນົດໄວ້, ແລະ ວັນທັງໝົດຂອງມັນ,
ເດືອນຂອງມັນ, ແລະ ປີຂອງມັນ, ແລະ ລັດ
ສະໝີພາບ, ກົດ, ແລະ ເວລາທີ່ໄດ້ຕັ້ງໄວ້
ທັງໝົດຂອງມັນ, ຈະຖືກເປີດເຜີຍໃນວັນ
ເວລາແຫ່ງ [ກ]ຍຸກສະໄໝຂອງຄວາມສົມບູນ
ແຫ່ງເວລາ—
32 ຕາມສິ່ງຊຶ່ງໄດ້ຖືກແຕ່ງຕັ້ງໃນທ່າມ
ກາງ [ກ]ສະພາຂອງ [ຂ]ພຣະເຈົ້າຜູ້ສະຖິດນິ
ລັນດອນຂອງພຣະເຈົ້າອົງອື່ນໆທັງປວງ
ກ່ອນໂລກນີ້ເປັນມາ, ຊຶ່ງຄວນເກັບຮັກສາ
ໄວ້ຈົນເຖິງການສຳເລັດ ແລະ ການສິ້ນສຸດ
ຂອງມັນ, ເມື່ອມະນຸດທຸກຄົນຈະເຂົ້າໄປໃນ
[ຄ]ທີ່ປະທັບນິລັນດອນຂອງພຣະອົງ ແລະ
ໃນ [ງ]ທີ່ພັກອະມະຕະຂອງພຣະອົງ.
33 ອີກດົນນານປານໃດທີ່ຜືນນ້ຳທີ່ໄຫລ
ລ່ອງຈະຍັງຄົງບໍ່ບໍລິສຸດ? ອຳນາດໃດທີ່ຈະ
ຢັບຢັ້ງສະຫວັນ? ດັ່ງມະນຸດຈະເດ່ແຂນ
ອັນບອບບາງຂອງເຂົາອອກໄປຢຸດແມ່ນ້ຳ
ມີເຊີຣີບໍ່ໃຫ້ໄຫລໄປຕາມທິດທາງຂອງມັນ
ຫລື ເຮັດໃຫ້ມັນໄຫລຍ້ອນກັບໄປບໍ່ໄດ້ສັນ
ໃດ, ກໍຈະບໍ່ສາມາດຂັດຂວາງພຣະຜູ້ຊົງ
ລິດອຳນາດຍິ່ງໃຫຍ່ໃຫ້ຖອກເທ [ກ]ຄວາມ
ຮູ້ຈາກສະຫວັນລົງມາເທິງຫົວຂອງໄພ່ພົນ
ຍຸກສຸດທ້າຍບໍ່ໄດ້ສັນນັ້ນ.

25 *ກ* ໂຢບ 7:1; ຄພ 122:9.
*ຂ* ຄມພ ວຽກງານ.
26 *ກ* ດນອ 2:20–22;
ຫຼຊ 1:9.
ຄມພ ເປີດເຜີຍ,
ການເປີດເຜີຍ.
*ຂ* ຄພ 8:2–3.
*ຄ* ຄມພ ຂອງປະທານແຫ່ງ
ພຣະວິນຍານບໍລິສຸດ.
28 *ກ* ຄພ 42:61; 76:7–8; 98:12.
*ຂ* ພສສ 82:1, 6;
ຢຮ 10:34–36;
1 ກຣທ 8:5–6;
ຄພ 76:58; 132:20;
ອຣຮ 4:1; 5:1–2.
29 *ກ* ຄພ 101:32.
30 *ກ* ໂຢບ 26:7–14;
ພສສ 104:5–9;
ກຈກ 17:26.
31 *ກ* ຄມພ ຍຸກສະໄໝ.
32 *ກ* ຄມພ ກອງປະຊຸມ
ໃນສະຫວັນ.
*ຂ* ພບຍ 10:17.
*ຄ* ຄມພ ມະນຸດ—ມະນຸດ,
ສັກກະຍະພາບທີ່ຈະ
ກາຍເປັນເໝືອນດັ່ງພຣະ
ບິດາເທິງສະຫວັນ.
*ງ* ຄມພ ພັກຜ່ອນ.
33 *ກ* ຄພ 128:19.
ຄມພ ຄວາມຮູ້.

34 ຈົ່ງ ເບິ່ງ, ມີຫລາຍຄົນໄດ້ [ກ]ຖືກເອີ້ນ,
ແຕ່ມີໜ້ອຍຄົນໄດ້ [ຂ]ຖືກເລືອກ. ແລະ ເປັນ
ຫຍັງພວກເຂົາຈຶ່ງບໍ່ຖືກເລືອກ?
35 ເພາະ ໃຈຂອງ ພວກ ເຂົາໝົກໝຸ້ນຢູ່
ກັບສິ່ງທີ່ເປັນຂອງ [ກ]ໂລກນີ້ຫລາຍ, ແລະ
ສະແຫວງຫາ [ຂ]ກຽດຕິຍົດຈາກມະນຸດ, ຈົນ
ວ່າພວກເຂົາບໍ່ຮຽນຮູ້ບົດຮຽນບົດດຽວນີ້—
36 ວ່າ [ກ]ສິດຂອງຖານະປະໂລຫິດກ່ຽວ
ຂ້ອງກັບອຳນາດແຫ່ງສະຫວັນຢ່າງແຍກ
ກັນບໍ່ໄດ້, ແລະວ່າ [ຂ]ອຳນາດແຫ່ງສະຫວັນ
ຈະຖືກບັງຄັບບໍ່ໄດ້ ຫລື ຖືກໃຊ້ບໍ່ໄດ້ນອກ
ຈາກຕາມຫລັກທຳແຫ່ງ [ຄ]ຄວາມຊອບທຳ
ເທົ່ານັ້ນ.
37 ວ່າ ມັນ ຖືກ ມອບ ໃຫ້ ພວກ ເຮົາ, ນັ້ນ
ເປັນ ຄວາມ ຈິງ; ແຕ່ເມື່ອພວກເຮົາ ພະຍາ
ຍາມ [ກ]ປົກປິດ [ຂ]ບາບຂອງພວກເຮົາ, ຫລື
ສະໜອງ [ຄ]ຄວາມທະນົງຕົວຂອງພວກເຮົາ,
ຄວາມ ທະ ເຍີທະຍານອັນໄຮ້ປະໂຫຍດ
ຂອງພວກເຮົາ, ຫລື ໃຊ້ການບັງຄັບ ຫລື
ການ ຄອບ ຄອງ ຫລື ການ ບີບ ບັງຄັບ ຈິດ
ວິນຍານຂອງລູກຫລານມະນຸດ, ໃນຄວາມ
ບໍ່ ຊອບ ທຳ ລະ ດັບ ໃດ ກໍ ຕາມ, ຈົ່ງ ເບິ່ງ,
ສະຫວັນຈະ [ງ]ຖອນຕົວ; ພຣະວິນຍານຂອງ
ພຣະຜູ້ເປັນເຈົ້າຈະໂສກເສົ້າ; ແລະ ເມື່ອ
ຖືກຖອນຕົວ, ກໍອາແມນກັບຖານະປະໂລ
ຫິດ ຫລື ສິດອຳນາດຂອງຊາຍຄົນນັ້ນ.
38 ຈົ່ງເບິ່ງ, ກ່ອນເຂົາຈະຮູ້ສຶກຕົວ, ເຂົາ
ກໍຖືກປະຖິ້ມໃຫ້ຢູ່ໂດດດ່ຽວເສຍແລ້ວ, ໃຫ້
[ກ]ເຕະໝາມ, ໃຫ້ [ຂ]ຂົ່ມເຫັງ ໄພ່ພົນຂອງ
ພຣະເຈົ້າ, ແລະ ໃຫ້ຕໍ່ສູ້ກັບພຣະເຈົ້າ.
39 ພວກເຮົາໄດ້ຮຽນຮູ້ໂດຍປະສົບການ
ທີ່ເສົ້າສະຫລົດໃຈວ່າ ມັນເປັນ [ກ]ສັນດານ
ແລະ ທຳມະຊາດຂອງມະນຸດເກືອບທຸກ
ຄົນ, ທັນທີທີ່ພວກເຂົາໄດ້ສິດອຳນາດເລັກ
ນ້ອຍ, ຢ່າງທີ່ເຂົາເຂົ້າໃຈ, ແລ້ວເຂົາຈະ
ເລີ່ມໃຊ້ອຳນາດການປົກຄອງທີ່ບໍ່ຊອບທຳ
ທັນທີ.
40 ດ້ວຍ ເຫດ ນີ້ ຫລາຍ ຄົນ ຈຶ່ງ ໄດ້ ຖືກ
ເອີ້ນ, ແຕ່ໜ້ອຍຄົນໄດ້ຖືກເລືອກ.
41 ບໍ່ມີອຳນາດ ຫລື ອິດທິພົນໃດສາມາດ
ຫລື ຈະ ດຳລົງຮັກສາ ໄວ້ ໄດ້ ໂດຍ ອາໄສ
ຖານະປະໂລຫິດ, ນອກຈາກໂດຍ [ກ]ການ
ຊັກ ຊວນ, ໂດຍ [ຂ]ຄວາມ ອົດກັ້ນ, ໂດຍ
ຄວາມອ່ອນໂຍນ ແລະ ໂດຍຄວາມອ່ອນ
ນ້ອມ, ແລະ ໂດຍຄວາມຮັກອັນບໍ່ແກ້ງເຮັດ;
42 ໂດຍຄວາມກະລຸນາ, ແລະ ຄວາມຮູ້
ອັນບໍລິສຸດ, ຊຶ່ງຈະຂະຫຍາຍຈິດວິນຍານ
ອອກໄປຢ່າງກວ້າງຂວາງ ໂດຍປາດສະ
ຈາກ [ກ]ຄວາມໜ້າຊື່ໃຈຄົດ, ແລະ ປາດສະ
ຈາກ [ຂ]ອຸບາຍ—
43 [ກ]ຈົ່ງຕິຕຽນໃຫ້ທັນການ ດ້ວຍຄວາມ
ສຽບຂາດ, ເມື່ອໄດ້ຮັບການກະຕຸ້ນ ໂດຍ
ພຣະວິນຍານບໍລິສຸດ; ແລະ ຈາກນັ້ນ ໃນ
ເວລາຕໍ່ມາຈົ່ງສະແດງ [ຂ]ຄວາມຮັກຫລາຍ

34 *ກ* ມທ 20:16; 22:1–14; ຄພ 95:5–6. ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
*ຂ* ຄມພ ເລືອກ, ໄດ້ເລືອກ, ຖືກເລືອກ.
35 *ກ* ຄມພ ຄວາມເປັນຢູ່ທາງໂລກ.
*ຂ* ມທ 6:2; 2 ນຟ 26:29.
36 *ກ* ຄມພ ສິດອຳນາດ; ຖານະປະໂລຫິດ.
*ຂ* ຄມພ ອຳນາດ.
*ຄ* ຄມພ ຊອບທຳ, ຄວາມຊອບທຳ.
37 *ກ* ສພສ 28:13.
*ຂ* ຄມພ ບາບ.
*ຄ* ຄມພ ຈອງຫອງ, ຄວາມຈອງຫອງ.
*ງ* ຄພ 1:33.
38 *ກ* ກຈກ 9:5.
*ຂ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
39 *ກ* ຄມພ ມະນຸດທີ່ມີຈິດໃຈທຳມະດາ.
41 *ກ* 1 ປຕ 5:1–3.
*ຂ* 2 ກຣທ 6:4–6.
42 *ກ* ຢກບ 3:17.
*ຂ* ຄມພ ມານຍາ.
43 *ກ* ຄມພ ຕີສອນ, ການຕີສອນ.
*ຂ* ຄມພ ໃຈບຸນ, ຄວາມໃຈບຸນ; ຮັກ, ຄວາມຮັກ.

ຂຶ້ນຕໍ່ຄົນທີ່ທ່ານຕຳນິ, ຖ້າບໍ່ດັ່ງນັ້ນເຂົາຈະ
ຖືວ່າທ່ານເປັນສັດຕູຂອງເຂົາ;
44 ເພື່ອວ່າເຂົາຈະຮູ້ວ່າຄວາມຊື່ສັດຂອງ
ທ່ານ ແຂງແກ່ນຫລາຍກວ່າ ເຊືອກ ແຫ່ງ
ຄວາມຕາຍ.
45 ໃຫ້ ອຸ ທອນ ຂອງ ທ່ານ ເຕັມ ປ່ຽມ ໄປ
ດ້ວຍ ຄວາມ ໃຈບຸນຕໍ່ມະນຸດທັງປວງນຳ
ອີກ, ແລະ ຕໍ່ຄອບຄົວ ແຫ່ງສັດທາ, ແລະ
ໃຫ້ [ກ]ຄຸນ ນະທຳ ປະດັບ [ຂ]ຄວາມ ນຶກຄິດ
ຂອງ ທ່ານຢ່າງ ບໍ່ ເສື່ອມຄາຍ; ເມື່ອ ນັ້ນ
ຄວາມໝັ້ນໃຈຂອງທ່ານຈະແຂງແກ່ນຂຶ້ນ
ໃນທີ່ປະທັບຂອງພຣະເຈົ້າ; ແລະ ຄຳສອນ
ຂອງຖານະປະໂລຫິດຈະກັ່ນລົງມາເທິງ
ຈິດວິນຍານຂອງທ່ານເໝືອນດັ່ງຢາດ [ຄ]ນ້ຳ
ຄ້າງຈາກສະຫວັນ.
46 [ກ]ພຣະວິນຍານບໍລິສຸດຈະເປັນເພື່ອນ
ຂອງທ່ານສະເໝີ, ແລະ ໄມ້ຄ້ອນເທົ້າແຫ່ງ
ອຳນາດຂອງທ່ານ ຈະເປັນໄມ້ຄ້ອນເທົ້າ
ອັນບໍ່ປ່ຽນແປງແຫ່ງຄວາມຊອບທຳ ແລະ
ຄວາມ ຈິງ; ແລະ [ຂ]ການ ຄອບ ຄອງ ຂອງ
ທ່ານຈະເປັນການຄອບຄອງອັນເປັນນິດ,
ແລະ ປາດສະຈາກການບັງຄັບ ຊຶ່ງໝາຍ
ຄວາມວ່າມັນຈະໄຫລມາສູ່ທ່ານຕະຫລອດ
ການ ແລະ ຕະຫລອດໄປ.

## ພາກທີ 122

*ພຣະຄຳຂອງພຣະຜູ້ເປັນເຈົ້າຕໍ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນຂະນະທີ່ເພິ່ນຖືກຈຳຄຸກຢູ່ທີ່ເມືອງລິເບີຕີ, ລັດມີເຊີຣີ. ພາກນີ້ແມ່ນການຄັດລອກເອົາມາຈາກ ສານທີ່ສົ່ງເຖິງສາດສະໜາຈັກ ລົງວັນທີ 20 ເດືອນມີນາ 1839 (ເບິ່ງ ຫົວຂໍ້ຂອງ ພາກທີ 121).*

*1–4, ທີ່ສຸດຂອງແຜ່ນດິນໂລກຈະສອບຖາມກ່ຽວກັບນາມຂອງໂຈເຊັບ ສະມິດ; 5–7, ໄພອັນຕະລາຍ ແລະ ຄວາມເຈັບປວດທັງປວງຂອງເພິ່ນຈະເປັນປະສົບການແກ່ເພິ່ນ ແລະ ເກີດຂຶ້ນເພື່ອຄວາມດີຂອງເພິ່ນ; 8–9, ບຸດມະນຸດໄດ້ລົງຕ່ຳກວ່າທຸກສິ່ງເຫລົ່ານັ້ນທັງໝົດ.*

1 ທີ່ສຸດຂອງແຜ່ນດິນໂລກຈະສອບຖາມ
ກ່ຽວກັບ [ກ]ນາມຂອງເຈົ້າ, ແລະ ຄົນໂງ່ຈະ
ເຫັນວ່າເຈົ້າສົມຄວນທີ່ຈະຖືກເຍາະເຍີ້ຍ,
ແລະ ນະລົກຈະລຸກໄໝ້ຕໍ່ຕ້ານເຈົ້າ;
2 ໃນຂະນະທີ່ຜູ້ທີ່ມີໃຈບໍລິສຸດ, ແລະ ຄົນ
ສະຫລາດ, ແລະ ຜູ້ມີກຽດ, ແລະ ຜູ້ມີຄຸນນະ
ທຳ, ຈະສະແຫວງຫາ [ກ]ຄຳແນະນຳ, ແລະ
ສິດອຳນາດ, ແລະ ພອນຢູ່ສະເໝີຈາກມື
ຂອງເຈົ້າ.
3 ແລະ ປະຈັກພະຍານຂອງຄົນທີ່ທໍລະ
ຍົດຕໍ່ເຈົ້າຈະບໍ່ສາມາດເຮັດໃຫ້ຜູ້ຄົນຂອງ
ເຈົ້າຫັນມາຕໍ່ຕ້ານເຈົ້າ.
4 ແລະ ເຖິງ ແມ່ນ ອິດ ທິ ພົນ ຂອງ ພວກ
ເຂົາຈະນຳເຈົ້າໄປສູ່ຄວາມທຸກຮ້ອນ, ແລະ
ໄປສູ່ກົງເຫລັກ ແລະ ກຳແພງ, ແຕ່ເຈົ້າຈະ
ຖືກຍົກຍ້ອງ; ແລະ [ກ]ບໍ່ດົນສຽງຂອງເຈົ້າຈະ
ເປັນໜ້າຢ້ານກົວໃນທ່າມກາງສັດຕູຂອງ
ເຈົ້າຍິ່ງກວ່າສຽງຂອງ [ຂ]ໂຕສິງດຸເດືອດ,

---

45 *ກ* ຄມພ ຄຸນນະທຳ.
*ຂ* ຄມພ ຄວາມຄິດ.
*ຄ* ພບຍ 32:1–2; ຄພ 128:19.
46 *ກ* ຄມພ ພຣະວິນຍານບໍລິສຸດ.
*ຂ* ດນອ 7:13–14.
**122** 1 *ກ* ຈສ—ປ 1:33.
2 *ກ* ຄມພ ຄຳແນະນຳ.
4 *ກ* ຄພ 121:7–8.
*ຂ* 3 ນຟ 20:16–21; 21:12.

ເພາະຄວາມຊອບທຳຂອງເຈົ້າ; ແລະ ພຣະ
ເຈົ້າ ຂອງເຈົ້າ ຢືນຄຽງຂ້າງເຈົ້າຕະຫລອດ
ການ ແລະ ຕະຫລອດໄປ.
5 ຖ້າຫາກເຈົ້າໄດ້ຖືກເອີ້ນໃຫ້ປະສົບກັບ
ຄວາມທຸກຍາກລຳບາກ; ຖ້າຫາກເຈົ້າຢູ່ໃນ
ໄພອັນຕະລາຍທ່າມກາງອ້າຍເອື້ອຍນ້ອງ
ຈອມປອມຂອງເຈົ້າ; ຖ້າຫາກເຈົ້າຢູ່ໃນໄພ
ອັນຕະລາຍທ່າມກາງພວກໂຈນ; ຖ້າຫາກ
ເຈົ້າຢູ່ໃນໄພອັນຕະລາຍເທິງບົກ ຫລື ໃນ
ທະເລ;
6 ຖ້າຫາກເຈົ້າຖືກກ່າວຫາດ້ວຍຂໍ້ກ່າວ
ຫາເທັດ; ຖ້າຫາກສັດຕູມາຮຸກຮານເຈົ້າ;
ຖ້າຫາກພວກເຂົາແຍກເຈົ້າຈາກການຢູ່
ກັບພໍ່ແມ່ ແລະ ອ້າຍເອື້ອຍນ້ອງຂອງເຈົ້າ;
ແລະ ຖ້າຫາກດ້ວຍດາບທີ່ສັດຕູຂອງເຈົ້າ
ຖອດອອກມາເພື່ອແຍກເຈົ້າອອກຈາກ
ອົກຂອງພັນລະຍາຂອງເຈົ້າ, ແລະ ຈາກ
ລູກໆຂອງເຈົ້າ, ແລະ ຈາກລູກຜູ້ໃຫຍ່ຂອງ
ເຈົ້າ, ເຖິງແມ່ນພຽງແຕ່ອາຍຸຫົກປີ, ຈະ
ດຶງອາພອນຂອງເຈົ້າ, ແລະ ຈະກ່າວວ່າ
ພໍ່ເອີຍ, ພໍ່ເອີຍ, ເປັນຫຍັງພໍ່ຈຶ່ງຢູ່ນຳພວກ
ເຮົາບໍ່ໄດ້? ໂອ້, ພໍ່ເອີຍ, ພວກຜູ້ຊາຍເຫລົ່າ
ນັ້ນຈະເຮັດຫຍັງກັບພໍ່? ແລະ ຈາກນັ້ນ ຖ້າ
ຫາກເຂົາຈະຖືກຊຸກໝີຈາກເຈົ້າດ້ວຍດາບ,
ແລະ ເຈົ້າຖືກລາກໄປທີ່ຄຸກ, ແລະ ສັດຕູ
ຂອງເຈົ້າວົນວຽນອ້ອມຮອບເຈົ້າຄືກັບຝູງ
ໝາ *ກ*ປ່າຢາກກິນເລືອດຂອງລູກແກະ;
7 ແລະ ຖ້າຫາກເຈົ້າຖືກໂຍນລົງໄປໃນ
ຫລຸມ, ຫລື ໃນມືຂອງຄາດຕະກອນ, ແລະ
ຖືກຕັດສິນປະຫານຊີວິດ; ຖ້າຫາກເຈົ້າ
ຖືກໂຍນລົງໄປໃນ *ກ*ເຫວເລິກ; ຖ້າຫາກ
ຄື້ນໃຫຍ່ຊັດກະໜ່ຳເຈົ້າ; ຖ້າຫາກພະຍຸ
ຮ້າຍກາຍເປັນສັດຕູຂອງເຈົ້າ; ຖ້າຫາກຟ້າ
ສະຫວັນເຕົ້າໂຮມຄວາມມືດ, ແລະ ທາດ
ທັງປວງຮ່ວມກັນຕັນທາງເຈົ້າ; ແລະ ເໜືອ
ທຸກສິ່ງອື່ນໝົດ, ຖ້າຫາກປາກ *ຂ*ນະລົກຈະ
ເປີດກວ້າງງັບເອົາເຈົ້າ, ເຈົ້າຈົ່ງຮູ້ໄວ້ເຖີດ,
ລູກຂອງພໍ່, ວ່າສິ່ງທັງໝົດເຫລົ່ານີ້ຈະເປັນ
*ຄ*ປະສົບການໃຫ້ແກ່ເຈົ້າ, ແລະ ຈະເກີດຂຶ້ນ
ເພື່ອຄວາມດີຂອງເຈົ້າ.
8 *ກ*ບຸດມະນຸດໄດ້ *ຂ*ລົງຕ່ຳກວ່າທຸກສິ່ງ
ເຫລົ່ານັ້ນທັງໝົດ. ເຈົ້າຍິ່ງໃຫຍ່ກວ່າພຣະ
ອົງບໍ?
9 ສະນັ້ນ, ຈົ່ງຍຶດໝັ້ນຢູ່ໃນທາງຂອງເຈົ້າ,
ແລະ ຖານະປະໂລຫິດຈະ *ກ*ຄົງຢູ່ກັບເຈົ້າ;
ເພາະ *ຂ*ຂອບເຂດຂອງມັນໄດ້ຖືກຕັ້ງໄວ້
ແລ້ວ, ມັນບໍ່ສາມາດຜ່ານຂ້າມ. *ຄ*ວັນເວລາ
ຂອງເຈົ້າໄດ້ຖືກຮັບຮູ້, ແລະ ປີຂອງເຈົ້າຈະ
ບໍ່ຖືກນັບໃຫ້ໜ້ອຍລົງ; ສະນັ້ນ, *ງ*ຢ່າຢ້ານ
ກົວສິ່ງທີ່ມະນຸດສາມາດເຮັດໄດ້, ເພາະ
ພຣະເຈົ້າຈະຢູ່ກັບເຈົ້າຕະຫລອດການ
ແລະ ຕະຫລອດໄປ.

# ພາກທີ 123

*ໜ້າທີ່ຂອງໄພ່ພົນຂອງພຣະເຈົ້າກ່ຽວກັບຜູ້ຂົ່ມເຫັງເຂົາເຈົ້າ, ດັ່ງທີ່ຖືກຂຽນໂດຍໂຈເຊັບ*

---

6 *ກ* ລກ 10:3.
7 *ກ* ຢນ 2:3–6.
*ຂ* 2 ຊມອ 22:5–7; ຈສ—ປ 1:15–16.
*ຄ* 2 ກຣທ 4:17; ຮຣ 12:10–11; 2 ນຟ 2:11.
8 *ກ* ຄມພ ບຸດມະນຸດ.
*ຂ* ຮຣ 2:9, 17–18; ຄພ 76:107; 88:6.
9 *ກ* ຄພ 90:3.
*ຂ* ກຈກ 17:26.
*ຄ* ຄພ 121:25.
*ງ* ນມຢ 4:14; ພສສ 56:4; 118:6; ສພສ 3:5–6; ອຊຢ 51:7; ລກ 12:4–5; 2 ນຟ 8:7; ຄພ 3:7; 98:14.

*ສະມິດ ຜູ້ເປັນສາດສະດາ ໃນຂະນະທີ່ເພິ່ນຖືກຈຳຄຸກຢູ່ທີ່ເມືອງລິເບີຕີ, ລັດມີເຊີຣີ. ພາກນີ້ຖືກຄັດລອກເອົາມາຈາກ ສານທີ່ສົ່ງເຖິງສາດສະໜາຈັກ ລົງວັນທີ 20 ເດືອນມີນາ 1839 (ເບິ່ງ ຫົວຂໍ້ຂອງ ພາກທີ 121).*

*1–6, ໄພ່ພົນຂອງພຣະເຈົ້າຄວນຮວບຮວມ ແລະ ພິມເລື່ອງລາວຄວາມທຸກທໍລະມານ ແລະ ການຖືກຂົ່ມເຫັງຂອງເຂົາເຈົ້າ; 7–10, ວິນຍານດຽວກັນນັ້ນທີ່ໄດ້ຈັດຕັ້ງຄວາມເຊື່ອຖືເທັດຂຶ້ນ ໄດ້ນຳໄປສູ່ການຂົ່ມເຫັງໄພ່ພົນຂອງພຣະເຈົ້ານຳອີກ; 11–17, ຫລາຍຄົນໃນບັນດານິກາຍທັງໝົດຍັງຈະໄດ້ຮັບຄວາມຈິງ.*

1 ແລະ ອີກເທື່ອໜຶ່ງ, ພວກເຮົາຂໍແນະນຳໃຫ້ພວກທ່ານພິຈາລະນາຄວາມສຳຄັນທີ່ໄພ່ພົນທັງຫລາຍຂອງພຣະເຈົ້າຈະຮວບຮວມຄວາມຮູ້ ແລະ ຂໍ້ມູນທັງໝົດ, ແລະ ການທົນທຸກທໍລະມານ ແລະ ການຖືກຂົ່ມເຫັງທີ່ກະທຳກັບເຂົາເຈົ້າໂດຍຜູ້ຄົນຂອງລັດນີ້;

2 ແລະ ກ່ຽວກັບ ຊັບ ສິນ ທັງ ໝົດ ແລະ ຈຳນວນຄວາມເສຍຫາຍຊຶ່ງເຂົາເຈົ້າໄດ້ຮັບ, ທັງການທຳຮ້າຍທາງຊື່ສຽງ ແລະ ສ່ວນຕົວນຳອີກ, ຕະຫລອດທັງເຮືອນຊານບ້ານຊ່ອງ;

3 ແລະ ຊື່ຂອງທຸກຄົນທີ່ມີສ່ວນໃນການກົດຂີ່ຂົ່ມເຫັງເຂົາເຈົ້ານຳອີກ, ຕາມແຕ່ທີ່ເຂົາເຈົ້າຫາມາໄດ້ ແລະ ສືບພົບ.

4 ແລະ ບາງທີ ອາດຕ້ອງໄດ້ກຳນົດຄະນະກຳມະການຂຶ້ນເພື່ອສືບເລື່ອງເຫລົ່ານີ້ໃຫ້ພົບ, ແລະ ເພື່ອຮັບເອົາເລື່ອງລາວ ແລະ ຄຳໃຫ້ການ; ແລະ ເພື່ອຮວບຮວມສິ່ງພິມທີ່ໃສ່ຮ້າຍປ້າຍສີນຳອີກທີ່ກຳລັງແຜ່ລາມໄປທົ່ວ;

5 ແລະ ທຸກສິ່ງທີ່ມີຢູ່ໃນວາລະສານ, ແລະ ໃນປື້ມຮວບຮວມຄວາມຮູ້ສາລະພັດ, ແລະ ເຫດການໃນອະດີດທັງໝົດທີ່ພິມໃສ່ຮ້າຍປ້າຍສີ, ແລະ ທີ່ກຳລັງຂຽນຢູ່, ແລະ ໂດຍຜູ້ໃດ, ແລະ ສະເໜີເລື່ອງລາວທັງໝົດກ່ຽວກັບຄວາມປະພຶດອັນຕະພານ ແລະ ຊົ່ວຮ້າຍ ແລະ ການບັງຄັບຂູ່ເຂັນທີ່ໂຫດຮ້າຍ ທີ່ກະທຳຕໍ່ຜູ້ຄົນເຫລົ່ານີ້—

6 ເພື່ອວ່າພວກເຮົາບໍ່ພຽງແຕ່ຈະປ່າວປະກາດອອກໄປທົ່ວໂລກເທົ່ານັ້ນ, ແຕ່ຈະສະເໜີມັນຕໍ່ຜູ້ນຳຂອງຝ່າຍປົກຄອງນຳອີກໃຫ້ເຫັນສີສັນແຫ່ງຄວາມມືດ ແລະ ນະລົກຂອງພວກເຂົາ, ດັ່ງເປັນຄວາມພະຍາຍາມຄັ້ງສຸດທ້າຍທີ່ພຣະບິດາເທິງສະຫວັນຂອງພວກເຮົາໄດ້ບັນຊາພວກເຮົາ, ກ່ອນພວກເຮົາຈະສາມາດຮຽກຮ້ອງສິດທິຄຳສັນຍານັ້ນໄດ້ຢ່າງເຕັມທີ່ ແລະ ຢ່າງສົມບູນ ຊຶ່ງຈະທູນຂໍໃຫ້ພຣະອົງອອກມາຈາກ [a]ສະຖານທີ່ລີ້ຊ່ອນຕົວຂອງພຣະອົງ; ແລະ ເພື່ອປະຊາຊາດທັງປວງຈະຕົກຢູ່ໃນສະພາບທີ່ບໍ່ມີຂໍ້ແກ້ຕົວ ກ່ອນທີ່ພຣະອົງຈະສົ່ງອຳນາດແຫ່ງແຂນ ອັນມີລິດທານຸພາບຂອງພຣະອົງອອກມາໄດ້.

7 ນີ້ຄືໜ້າທີ່ອັນຈຳເປັນຢ່າງໜຶ່ງທີ່ພວກເຮົາເປັນໜີ້ພຣະເຈົ້າ, ເຫລົ່າທູດ, ຜູ້ຊຶ່ງພວກເຮົາຈະຖືກນຳມາຢືນຢູ່ດ້ວຍ, ແລະ ຕົວເຮົານຳອີກ, ພັນລະຍາ ແລະ ລູກໆຂອງພວກເຮົາ, ຜູ້ຖືກເຮັດໃຫ້ກົ້ມຂາບລົງດ້ວຍຄວາມໂສກເສົ້າ, ຄວາມສະຫລົດໃຈ, ແລະ ຄວາມກັງວົນ, ພາຍໃຕ້ມືທີ່ອັບປະໂຫຍດທີ່ສຸດຂອງການຄາດຕະກຳ, ການກົດຂີ່, ການຂົ່ມເຫັງ, ຊຶ່ງໄດ້ຮັບການ

**123** 6 *ກ* ຄພ 101:89; 121:1, 4.

ສະໜັບສະໜູນ ແລະ ຍຸຍົງ ແລະ ສົ່ງເສີມ
ໂດຍອິດທິພົນຂອງວິນຍານນັ້ນ, ຊຶ່ງໄດ້ປັກ
ຄວາມເຊື່ອຂອງບັນພະບຸດລຸດໄວ້ແໜ້ນ,
ຜູ້ໄດ້ສືບທອດຄວາມຕົວະເປັນມູນມໍລະ
ດົກໄວ້, ໃນໃຈຂອງລູກຫລານ, ແລະ ເຮັດ
ໃຫ້ໂລກເຕັມໄປດ້ວຍຄວາມສັບສົນ, ແລະ
ກຳລັງເຂັ້ມແຂງຂຶ້ນໄປເລື້ອຍໆ, ແລະ ບັດ
ນີ້ເປັນກົງຈັກອັນສຳຄັນຂອງຄວາມເສື່ອມ
ຊາມທັງປວງ, ແລະ ທັງ [ກ]ແຜ່ນດິນໂລກ
ຄວນຄາງຢູ່ໃຕ້ນ້ຳໜັກຂອງຄວາມຊົ່ວຮ້າຍ
ຂອງມັນ.
8 ມັນຄື [ກ]ແອກເຫລັກ, ມັນຄືສາຍຮັດທີ່
ແໜ້ນໜາ; ມັນຄືກັບມື, ແລະ ໂສ້, ແລະ
ຫ່ວງເຫລັກ, ແລະ ບ້ວງເຫລັກຂອງນະລົກ
ແທ້ໆ.
9 ສະນັ້ນ ມັນຈຶ່ງເປັນໜ້າທີ່ອັນຈຳເປັນ
ທີ່ພວກເຮົາເປັນໜີ້, ບໍ່ພຽງແຕ່ພັນລະຍາ
ແລະ ລູກໆຂອງພວກເຮົາເອງເທົ່ານັ້ນ, ແຕ່
ແມ່ໝ້າຍ ແລະ ລູກກຳພ້ານຳອີກ, ຜູ້ທີ່ສາມີ
ແລະ ພໍ່ໄດ້ຖືກ [ກ]ຂ້າພາຍໃຕ້ມືເຫລັກຂອງ
ມັນ;
10 ຊຶ່ງການກະທຳທີ່ດຳມືດກໍພຽງພໍແລ້ວ
ທີ່ຈະເຮັດໃຫ້ນະລົກເອງສັ່ນສະເທືອນ,
ແລະ ຈະຢືນຕົກຕະລຶງ ແລະ ຊີດໂຊມ,
ແລະ ມືຂອງມານນັ້ນເອງຈະສະທ້ານ ແລະ
ສັ່ນເຊັນ.
11 ແລະ ເປັນໜ້າທີ່ອັນຈຳເປັນທີ່ພວກ
ເຮົາເປັນໜີ້ຄົນລຸ້ນໃໝ່ທັງປວງ, ແລະ ທຸກ
ຄົນຜູ້ທີ່ມີໃຈບໍລິສຸດ—
12 ເພາະຍັງມີຫລາຍຄົນຢູ່ເທິງແຜ່ນດິນ
ໂລກນີ້ໃນບັນດາສຳນັກ, ກຸ່ມ, ແລະ ນິກາຍ
ທັງປວງ, ຜູ້ທີ່ [ກ]ຕາບອດໂດຍກົນອຸບາຍທີ່
ລີ້ລັບຂອງມະນຸດ, ຊຶ່ງໂດຍການນັ້ນພວກ
ເຂົາຄອຍຖ້າຫລອກລວງ, ແລະ ຜູ້ທີ່ຖືກກີດ
ກັນຈາກຄວາມຈິງ ເພາະພວກເຂົາ [ຂ]ບໍ່ຮູ້ວ່າ
ຈະຊອກຫາມັນໄດ້ຢູ່ບ່ອນໃດ—
13 ສະນັ້ນ, ວ່າພວກເຮົາຈະທຸ້ມເທ ແລະ
ໃຊ້ຊີວິດຂອງພວກເຮົາໃນການນຳທຸກ
[ກ]ສິ່ງທີ່ລີ້ລັບຢູ່ໃນຄວາມມືດທັງໝົດອອກ
ມາສູ່ຄວາມສະຫວ່າງ, ຊຶ່ງໃນການນີ້ ພວກ
ເຮົາຈຶ່ງຮູ້ຈັກມັນ; ແລະ ມັນຖືກສະແດງໃຫ້
ປະຈັກຈາກສະຫວັນແທ້ໆ—
14 ດັ່ງນັ້ນ ເລື່ອງເຫລົ່ານີ້ຕ້ອງຖືກຈັດ
ການດ້ວຍຄວາມເອົາໃຈໃສ່ເປັນຢ່າງຍິ່ງ.
15 ຢ່າໃຫ້ຄົນໃດຖືວ່າເລື່ອງເຫລົ່ານີ້ເປັນ
ເລື່ອງເລັກໜ້ອຍ; ເພາະມັນມີຢ່າງຫລວງ
ຫລາຍຢູ່ໃນອະນາຄົດ, ກ່ຽວກັບໄພ່ພົນ
ຂອງພຣະເຈົ້າ, ຊຶ່ງເພິ່ງພາອາໄສເລື່ອງ
ເຫລົ່ານີ້.
16 ພວກທ່ານຮູ້, ອ້າຍເອື້ອຍນ້ອງທັງ
ຫລາຍ, ວ່າເຮືອລຳໃຫຍ່ໄດ້ [ກ]ຮັບປະໂຫຍດ
ຢ່າງຫລວງຫລາຍຈາກພວງມະໄລເຮືອອັນ
ເລັກນ້ອຍໃນຍາມເກີດພະຍຸ, ໂດຍຮັກສາ
ມັນໄວ້ໃນເສັ້ນທາງພ້ອມກັບລົມ ແລະ ຄື້ນ.
17 ສະນັ້ນ, ອ້າຍເອື້ອຍນ້ອງທີ່ຮັກແພງ,
ຈົ່ງໃຫ້ພວກເຮົາເຮັດທຸກສິ່ງທຸກຢ່າງທີ່ຢູ່
ໃນອຳນາດຂອງພວກເຮົາ [ກ]ຢ່າງເບີກບານ
ມ່ວນຊື່ນ; ແລະ ຈາກນັ້ນຂໍໃຫ້ພວກເຮົາ
ຈົ່ງຢືນຢູ່ຊື່ໆ, ດ້ວຍຄວາມໝັ້ນໃຈທີ່ສຸດ,
ເພື່ອເຫັນ [ຂ]ຄວາມລອດຂອງພຣະເຈົ້າ,
ແລະ ເພື່ອພຣະອົງຈະເປີດເຜີຍແຂນຂອງ
ພຣະອົງ.

7 *ກ* ມຊ 7:48–49.
8 *ກ* ຄມພ ແອກ.
9 *ກ* ຄພ 98:13; 124:54.
12 *ກ* ກລຊ 2:8;
ຄພ 76:75.
*ຂ* 1 ນຟ 8:21–23.
13 *ກ* 1 ກຣທ 4:5.
16 *ກ* ຢກບ 3:4;
ແອວ 37:6–7;
ຄພ 64:33.
17 *ກ* ຄພ 59:15.
*ຂ* ອພຍ 14:13.

# ພາກທີ 124

*ການເປີດເຜີຍທີ່ມອບໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງນາວູ, ລັດອິລິນອຍ, ວັນທີ 19 ເດືອນມັງກອນ, 1841. ເພາະວ່າມີການຂົ່ມເຫັງ ແລະ ການເຮັດຜິດກົດໝາຍເພີ່ມທະວີຫລາຍຂຶ້ນຕ້ານເຂົາເຈົ້າໂດຍເຈົ້າໜ້າທີ່ລັດຖະບານ, ໄພ່ພົນຂອງພຣະເຈົ້າຈຶ່ງໄດ້ຖືກບັງຄັບໃຫ້ໜີຈາກລັດມີເຊີຣີ. ຄຳສັ່ງໃຫ້ກຳຈັດທີ່ອະນຸມັດໂດຍ ລິວເບິນ ດັບເບີນ ຢູ ບອກສ໌, ເຈົ້າລັດມີເຊີຣີ, ລົງວັນທີ 27 ເດືອນຕຸລາ, 1838, ເຮັດໃຫ້ເຂົາເຈົ້າບໍ່ມີທາງເລືອກ. ໃນປີ 1841, ເມື່ອການເປີດເຜີຍນີ້ໄດ້ຖືກມອບໃຫ້, ເມືອງນາວູ, ຊຶ່ງຕັ້ງຢູ່ໃນສະຖານທີ່ຊຶ່ງແຕ່ກ່ອນຄືໝູ່ບ້ານຄອມເມີສ, ລັດອິລິນອຍ, ໄດ້ຖືກສ້າງຂຶ້ນໂດຍໄພ່ພົນຂອງພຣະເຈົ້າ, ແລະ ຢູ່ທີ່ນີ້ສູນກາງໃຫຍ່ຂອງສາດສະໜາຈັກໄດ້ຖືກສະຖາປະນາຂຶ້ນ.*

*1–14, ໂຈເຊັບ ສະມິດ ຖືກບັນຊາໃຫ້ຂຽນການປະກາດທີ່ເປັນທາງການເລື່ອງຂອງພຣະກິດຕິຄຸນເຖິງປະທານາທິບໍດີຂອງສະຫະລັດ, ເຈົ້າລັດ, ແລະ ຜູ້ປົກຄອງຂອງທຸກປະຊາຊາດ; 15–21, ໄຮຣຳ ສະມິດ, ເດວິດ ດັບເບີນຢູ ແພດເຕັນ, ໂຈເຊັບ ສະມິດ, ຜູ້ພໍ່, ແລະ ຜູ້ອື່ນໆໃນບັນດາຄົນເປັນ ແລະ ຄົນຕາຍ ໄດ້ຮັບພອນສຳລັບຄວາມຊື່ສັດ ແລະ ຄຸນນະທຳຂອງເຂົາເຈົ້າ; 22–28, ໄພ່ພົນຂອງພຣະເຈົ້າໄດ້ຖືກບັນຊາໃຫ້ສ້າງບ້ານເພື່ອຕ້ອນຮັບຄົນຕ່າງດ້າວ ແລະ ພຣະວິຫານໃນເມືອງນາວູ; 29–36, ການບັບຕິສະມາແທນຄົນຕາຍຕ້ອງຖືກກະທຳຢູ່ໃນພຣະວິຫານ; 37–44, ຜູ້ຄົນຂອງພຣະຜູ້ເປັນເຈົ້າຈະສ້າງພຣະວິຫານສະເໝີ ເພື່ອປະຕິບັດພິທີການສັກສິດ; 45–55, ໄພ່ພົນຂອງພຣະເຈົ້າໄດ້ຖືກຍົກເວັ້ນຈາກການສ້າງພຣະວິຫານໃນເຂດແຈັກສັນເນື່ອງດ້ວຍການກົດຂີ່ຂອງສັດຕູຂອງເຂົາເຈົ້າ; 56–83, ມີຄຳແນະນຳໃຫ້ໄວ້ກ່ຽວກັບການສ້າງບ້ານຢູ່ເມືອງນາວູ; 84–96, ໄຮຣຳ ສະມິດ ຖືກເອີ້ນໃຫ້ເປັນປິຕຸ, ເພື່ອຮັບຂໍກະແຈ, ແລະ ຂຶ້ນແທນອໍລີເວີ ຄາວເດີຣີ; 97–122, ວິວລຽມລໍ ແລະ ຄົນອື່ນໆຖືກແນະນຳໃນວຽກງານຂອງເຂົາເຈົ້າ; 123–145, ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ ແລະ ໃນທ້ອງຖິ່ນໄດ້ຖືກລະບຸຊື່, ພ້ອມກັບໜ້າທີ່ ແລະ ກຸ່ມທີ່ເຂົາເຈົ້າກ່ຽວຂ້ອງດ້ວຍ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້ກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ ສະມິດ, ເຮົາພໍໃຈຫລາຍກັບເຄື່ອງ
ຖວາຍ ແລະ ການຍອມຮັບຂອງເຈົ້າ, ຊຶ່ງ
ເຈົ້າໄດ້ເຮັດມາ; ເພາະເພື່ອຈຸດເປົ້າໝາຍ
ນີ້ທີ່ເຮົາໄດ້ຍົກເຈົ້າຂຶ້ນ, ເພື່ອວ່າເຮົາຈະໄດ້
ສະແດງຄວາມສະຫລຽວສະຫລາດຂອງ
ເຮົາອອກມາທາງສິ່ງທີ່ [a]ອ່ອນແອຂອງ
ແຜ່ນດິນໂລກ.
2 ຄຳອະທິຖານຂອງເຈົ້າເປັນທີ່ຍອມຮັບ
ຕໍ່ເຮົາ; ແລະ ໃນການຕອບຄຳອະທິຖານ
ເຫລົ່ານັ້ນ ເຮົາກ່າວກັບເຈົ້າວ່າ ບັດນີ້ ເຈົ້າ
ໄດ້ຖືກເອີ້ນທັນທີໃຫ້ຂຽນການປະກາດເຖິງ
ພຣະກິດຕິຄຸນຂອງເຮົາດ້ວຍຄວາມໜັກ
ແໜ້ນ, ແລະ ກ່ຽວກັບ [a]ສະເຕກນີ້ ຊຶ່ງເຮົາ
ໄດ້ຕັ້ງໃຫ້ເປັນຫີນເສົາເອກຂອງຊີໂອນ, ຊຶ່ງ
ຈະຖືກຂັດເງົາດ້ວຍຄວາມປານິດ ຊຶ່ງຈະ
ເປັນໄປຕາມແບບຢ່າງທີ່ເໝືອນວັງ.

**124** 1*a* 1 ກຣທ 1:26–28; ຄພ 1:19; 35:13. 2*a* ຄມພ ສະເຕກ.

3 ການປະກາດນີ້ຈະຖືກກະທຳໄປເຖິງບັນດາ [ກ]ກະສັດທັງປວງຂອງ ໂລກ, ເຖິງສີ່ສ່ວນຂອງແຜ່ນດິນໂລກ, ເຖິງຜູ້ໄດ້ຖືກເລືອກເປັນປະທານາທິບໍດີທີ່ມີກຽດ, ແລະເຈົ້າລັດຕ່າງໆຜູ້ສູງສົ່ງຂອງປະຊາຊາດຊຶ່ງເຈົ້າອາໄສຢູ່, ແລະ ເຖິງປະຊາຊາດທັງປວງຂອງແຜ່ນດິນໂລກທີ່ກະຈັດກະຈາຍກັນຢູ່ທົ່ວໄປ.

4 ໃຫ້ ຂຽນ ມັນ ໄວ້ ໃນ ວິນ ຍານ ແຫ່ງ [ກ]ຄວາມອ່ອນໂຍນ ແລະ ໂດຍອຳນາດຂອງພຣະວິນຍານບໍລິສຸດ, ຊຶ່ງ ຈະຢູ່ໃນເຈົ້າໃນເວລາທີ່ຂຽນການປະກາດອັນດຽວກັນນັ້ນ;

5 ເພາະເຈົ້າ ຈະ ໄດ້ ຮັບ ໂດຍພຣະວິນຍານບໍລິສຸດໃຫ້ຮູ້ຈັກຄວາມປະສົງຂອງເຮົາກ່ຽວກັບກະສັດ ແລະ ເຈົ້າໜ້າທີ່ເຫລົ່ານັ້ນ, ແມ່ນແຕ່ສິ່ງທີ່ຈະບັງເກີດຂຶ້ນກັບພວກເຂົາໃນເວລາທີ່ຈະມາເຖິງ.

6 ເພາະ, ຈົ່ງເບິ່ງ, ເຮົາກຳລັງຈະເອີ້ນພວກເຂົາໃຫ້ເອົາໃຈໃສ່ຕໍ່ຄວາມສະຫວ່າງ ແລະ ລັດສະໝີພາບຂອງຊີໂອນ, ເພາະວ່າເວລາທີ່ໄດ້ກຳນົດໄວ້ມາເຖິງແລ້ວທີ່ຈະໂປດປານນາງ.

7 ສະນັ້ນ, ເຈົ້າ ຈົ່ງ ເອີ້ນ ຫາ ພວກ ເຂົາດ້ວຍການເອີ້ນປະກາດອັນດັງ, ແລະ ດ້ວຍປະຈັກພະຍານຂອງເຈົ້າ, ໂດຍບໍ່ຢ້ານກົວພວກເຂົາເລີຍ, ເພາະວ່າພວກເຂົາເປັນເໝືອນດັ່ງ [ກ]ຫຍ້າ, ແລະ ລັດສະໝີພາບທັງປວງຂອງພວກເຂົາເປັນເໝືອນດັ່ງດອກໄມ້ຊຶ່ງບໍ່ດົນກໍຈະລ້ວງຫລົ່ນ, ເພື່ອວ່າພວກເຂົາຈະຕົກຢູ່ໃນສະພາບທີ່ບໍ່ມີຂໍ້ແກ້ຕົວ—

8 ແລະ ເພື່ອວ່າເຮົາຈະໄດ້ມາຢ້ຽມຢາມພວກເຂົາໃນວັນແຫ່ງການມາຢ້ຽມຢາມ, ເມື່ອເຮົາຈະເປີດເຜີຍໜ້າຂອງເຮົາຈາກການປົກປິດ, ເພື່ອກຳນົດສ່ວນຂອງຜູ້ກົດຂີ່ໃນບັນດາຄົນໜ້າຊື່ໃຈຄົດ, ບ່ອນທີ່ມີ [ກ]ການຂົບແຂ້ວຄ້ຽວຟັນ, ຖ້າພວກເຂົາປະຕິເສດຜູ້ຮັບໃຊ້ຂອງເຮົາ ແລະ ປະຈັກພະຍານຂອງເຮົາ ຊຶ່ງເຮົາໄດ້ເປີດເຜີຍແກ່ພວກເຂົາ.

9 ແລະ ອີກເທື່ອໜຶ່ງ, ເຮົາຈະມາຢ້ຽມຢາມ ແລະ ເຮັດໃຫ້ໃຈຂອງພວກເຂົາອ່ອນລົງ, ຫລາຍຄົນພວກເຂົາເພື່ອຄວາມດີຂອງພວກເຈົ້າ, ເພື່ອວ່າພວກເຈົ້າຈະພົບພຣະຄຸນໃນສາຍຕາຂອງພວກເຂົາ, ເພື່ອວ່າພວກເຂົາຈະມາສູ່ [ກ]ຄວາມສະຫວ່າງແຫ່ງຄວາມຈິງ, ແລະ ຄົນຕ່າງຊາດມາສູ່ຄວາມສູງສົ່ງ ຫລື ການຍົກຂຶ້ນຂອງຊີໂອນ.

10 ເພາະວ່າວັນແຫ່ງການມາຢ້ຽມຢາມຂອງເຮົາຈະມາເຖິງຢ່າງໄວ, ໃນ [ກ]ຊົ່ວໂມງທີ່ພວກເຈົ້າບໍ່ຄາດຄິດ; ແລະ ບ່ອນໃດຈະເປັນສະຖານທີ່ປອດໄພຂອງຜູ້ຄົນຂອງເຮົາ, ແລະ ເປັນທີ່ພັກສຳລັບຄົນທີ່ຍັງເຫລືອຢູ່ໃນບັນດາພວກເຂົາ?

11 ຕື່ນເຖີດ, ໂອ້ ບັນດາກະສັດຂອງແຜ່ນດິນໂລກ! ຈົ່ງມາ, ໂອ້, ຈົ່ງມາ, ດ້ວຍຄຳຂອງພວກເຈົ້າ ແລະ ດ້ວຍເງິນຂອງພວກເຈົ້າ, ເພື່ອຊ່ວຍເຫລືອຜູ້ຄົນຂອງເຮົາ, ສູ່ບ້ານຂອງທິດາຂອງຊີໂອນ.

12 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ ຣໍເບີດ ບີ ທອມສັນ ຊ່ວຍເຫລືອເຈົ້າໃນການຂຽນການປະກາດນີ້, ເພາະ

---

3 *ກ* ພສສ 119:46; ມທ 10:18; ຄພ 1:23.
4 *ກ* ຄມພ ອ່ອນໂຍນ, ຄວາມອ່ອນໂຍນ.
7 *ກ* ພສສ 103:15–16; ອຊຢ 40:6–8; 1 ປຕ 1:24–25.
8 *ກ* ມທ 8:12; ແອວ 40:13; ຄພ 101:91; 112:24.
9 *ກ* ອຊຢ 60:1–4. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
10 *ກ* ມທ 24:44; ຈສ—ມ 1:48.

ເຮົາພໍໃຈຫລາຍກັບລາວ, ແລະ ທີ່ລາວຈະຢູ່ກັບເຈົ້າ;

13 ສະນັ້ນ, ຈົ່ງໃຫ້ລາວເຊື່ອຟັງຄຳແນະນຳຂອງເຈົ້າ, ແລະ ເຮົາຈະໃຫ້ພອນແກ່ລາວ ດ້ວຍ ພອນຢ່າງຫລວງ ຫລາຍ; ໃຫ້ລາວຊື່ສັດ ແລະ ຈິງຈັງໃນທຸກສິ່ງທັງປວງນັບ ແຕ່ ນີ້ເປັນຕົ້ນ ໄປ, ແລະ ລາວຈະຍິ່ງໃຫຍ່ໃນສາຍຕາຂອງເຮົາ;

14 ແຕ່ໃຫ້ລາວຈື່ຈຳໄວ້ວ່າ [ກ]ການພິທັກຮັກສາຂອງລາວຈະຖືກຮຽກຮ້ອງຈາກມືຂອງລາວ.

15 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງແລ້ວ ເຮົາກ່າວກັບເຈົ້າວ່າ ຜູ້ຮັບໃຊ້ຂອງເຮົາ [ກ]ໄຮຣຳ ສະມິດ ເປັນສຸກແລ້ວ; ເພາະເຮົາ, ພຣະຜູ້ເປັນເຈົ້າ, ຮັກ ລາວ ເພາະ[ຂ]ຄວາມຊື່ສັດຂອງໃຈລາວ, ແລະ ເພາະວ່າລາວຮັກສິ່ງທີ່ຖືກຕ້ອງຕໍ່ໜ້າເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

16 ອີກເທື່ອໜຶ່ງ, ໃຫ້ຜູ້ຮັບ ໃຊ້ຂອງເຮົາຈອນ ຊີ ເບັນເນັດ ຊ່ວຍເຫລືອເຈົ້າໃນວຽກງານຂອງເຈົ້າ ໃນການສົ່ງຄຳຂອງເຮົາໄປເຖິງບັນດາກະສັດ ແລະ ຜູ້ຄົນຂອງແຜ່ນດິນໂລກ, ແລະ ຢືນຄຽງຂ້າງເຈົ້າ, ແມ່ນແຕ່ເຈົ້າຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ສະມິດ, ໃນຊົ່ວໂມງແຫ່ງຄວາມທຸກຍາກລຳບາກ; ແລະລາງວັນຂອງລາວຈະບໍ່ສູນເສຍໄປໃສ ຖ້າຫາກລາວຮັບເອົາ [ກ]ຄຳແນະນຳ.

17 ແລະ ເປັນເພາະຄວາມຮັກຂອງລາວ, ລາວຈະຍິ່ງໃຫຍ່, ເພາະວ່າລາວຈະເປັນຂອງເຮົາ ຖ້າຫາກລາວເຮັດສິ່ງນີ້, ພຣະຜູ້ເປັນເຈົ້າໄດ້ກ່າວ. ເຮົາໄດ້ເຫັນວຽກງານທີ່ລາວເຮັດມາແລ້ວ, ຊຶ່ງເຮົາຍອມຮັບຖ້າຫາກລາວເຮັດຕໍ່ໄປ, ແລະ ຈະສວມມົງກຸດໃຫ້ລາວ ພ້ອມດ້ວຍພອນ ແລະ ລັດສະໝີພາບອັນຍິ່ງໃຫຍ່.

18 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບເຈົ້າວ່າ ມັນເປັນຄວາມປະສົງຂອງເຮົາທີ່ຜູ້ຮັບໃຊ້ຂອງເຮົາ ໄລມັນ ໄວ້ ຈະສັ່ງສອນຕໍ່ໄປເພື່ອຊີໂອນ, ໃນວິນຍານແຫ່ງຄວາມອ່ອນໂຍນ, ໂດຍຍອມຮັບ ເຮົາຢູ່ຕໍ່ໜ້າ ໂລກ; ແລະ ເຮົາຈະຄ້ຳຈູນລາວດັ່ງເທິງປີກ [ກ]ນົກອິນຊີ; ແລະ ລາວຈະກໍ່ໃຫ້ເກີດລັດສະໝີພາບ ແລະ ກຽດຕິຍົດໃຫ້ແກ່ຕົນເອງ ແລະໃຫ້ແກ່ນາມຂອງເຮົາ.

19 ເພື່ອວ່າເມື່ອລາວບັນລຸວຽກງານຂອງລາວ ເຮົາຈະຮັບລາວກັບຕົວເຮົາ, ເໝືອນດັ່ງທີ່ ເຮົາ ໄດ້ ເຮັດ ກັບ ຜູ້ຮັບ ໃຊ້ຂອງເຮົາ[ກ]ເດວິດ ແພດເຕັນ, ຜູ້ທີ່ຢູ່ກັບເຮົາໃນເວລານີ້, ແລະ ຜູ້ຮັບ ໃຊ້ຂອງ ເຮົາ [ຂ]ເອດເວີດພາດທຣິດ ນຳອີກ, ແລະ ຜູ້ຮັບໃຊ້ອາວຸໂສຂອງເຮົາ [ຄ]ໂຈເຊັບ ສະມິດ, ຜູ້ພໍ່, ນຳອີກ, ຜູ້ທີ່ນັ່ງ [ງ]ກັບອັບຣາຮາມທາງຂວາມືຂອງລາວ, ແລະ ລາວເປັນສຸກແລ້ວ ແລະ ບໍລິສຸດ, ເພາະວ່າລາວເປັນຂອງເຮົາ.

20 ແລະ ອີກເທື່ອ ໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາຈອດ ມຽວເລີ ປາດສະຈາກ [ກ]ອຸບາຍ; ລາວເປັນຄົນທີ່ໄວ້ວາງໃຈໄດ້ ເພາະຄວາມຊື່ສັດຂອງໃຈລາວ; ແລະ ເພາະຄວາມຮັກຊຶ່ງລາວມີຕໍ່ປະຈັກພະຍານຂອງເຮົາ, ເຮົາ, ພຣະຜູ້ເປັນເຈົ້າ, ຮັກລາວ.

21 ສະນັ້ນ ເຮົາກ່າວກັບເຈົ້າວ່າ ເຮົາ

14 ກ ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
15 ກ ຄມພ ສະມິດ, ໄຮຣຳ.
ຂ ຄມພ ຊື່ສັດ, ຄວາມຊື່ສັດ.
16 ກ ຄມພ ຄຳແນະນຳ.
18 ກ ອພຍ 19:4; ອຊຢ 40:31.
19 ກ ຄພ 124:130. ຄມພ ແພດເຕັນ, ເດວິດ ດັບເບິນຢູ.
ຂ ຄມພ ພາດທຣິດ, ເອດເວີດ.
ຄ ຄມພ ສະມິດ, ໂຈເຊັບ, ຜູ້ພໍ່.
ງ ຄພ 137:5.
20 ກ ຄມພ ມານຍາ.

ຜະນຶກໜ້າ ທີ່ຂອງ ກຝ່າຍອະທິການ ໄວ້
ເທິງຫົວຂອງລາວ, ເໝືອນກັນກັບຜູ້ຮັບ
ໃຊ້ຂອງເຮົາ ເອດເວີດ ພາດທຣິດ, ເພື່ອ
ວ່າລາວຈະໄດ້ຮັບຂອງອຸທິດສຳລັບຄົວ
ເຮືອນຂອງເຮົາ, ເພື່ອວ່າລາວຈະໄດ້ມອບ
ພອນໄວ້ເທິງຫົວຂອງຄົນຍາກຈົນຂອງຜູ້
ຄົນຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.
ຢ່າໃຫ້ມະນຸດຄົນໃດໝິ່ນປະໝາດຜູ້ຮັບ
ໃຊ້ຂອງເຮົາ ຈອດ, ເພາະວ່າລາວຈະໃຫ້
ກຽດເຮົາ.
22 ໃຫ້ຜູ້ຮັບໃຊ້ຂອງເຮົາ ຈອດ, ແລະ ຜູ້
ຮັບ ໃຊ້ ຂອງເຮົາ ໄລມັນ, ແລະ ຜູ້ຮັບໃຊ້
ຂອງເຮົາ ຈອນ ສະໄນເດີ, ແລະ ຄົນອື່ນໆ
ສ້າງ ກບ້ານແດ່ນາມຂອງເຮົາ, ໃນຮູບແບບ
ທີ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ຈະສະແດງ
ແກ່ພວກເຂົາ, ໃນສະຖານທີ່ທີ່ລາວຈະ
ສະແດງແກ່ພວກເຂົາຄືກັນ.
23 ແລະ ມັນຈະເປັນບ້ານພັກ, ບ້ານທີ່
ຄົນຕ່າງດ້າວທີ່ມາຈາກແດນໄກຈະພັກພາ
ອາໄສ; ສະນັ້ນ ໃຫ້ມັນເປັນບ້ານທີ່ດີ, ຄູ່
ຄວນກັບການຍອມຮັບທັງປວງ, ເພື່ອວ່າ
ກຄົນເດີນທາງທີ່ເມື່ອຍອ່ອນຈະມີເຫື່ອແຮງ
ຂຶ້ນ ແລະ ຄວາມປອດໄພໃນຂະນະທີ່ພວກ
ເຂົາໄຕ່ຕອງພຣະຄຳຂອງພຣະຜູ້ເປັນເຈົ້າ;
ແລະ ຂຫີນເສົາເອກທີ່ເຮົາໄດ້ກຳນົດໄວ້ໃຫ້
ຊີໂອນ.
24 ບ້ານນີ້ ຈະ ເປັນ ບ້ານ ພັກ ທີ່ ສຸກ ສະ
ບາຍຖ້າຫາກມັນຖືກສ້າງຂຶ້ນແດ່ນາມຂອງ
ເຮົາ, ແລະ ຖ້າຫາກຜູ້ປົກຄອງ ຊຶ່ງຈະກຳ
ນົດໄວ້ກັບມັນຈະບໍ່ປ່ອຍໃຫ້ມົນທິນໃດໆ
ມາສູ່ບ້ານຫລັງນີ້. ມັນຈະເປັນສະຖານທີ່
ສັກສິດ, ຖ້າບໍ່ດັ່ງນັ້ນ ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຈົ້າຈະບໍ່ປະທັບຢູ່
ໃນນັ້ນ.
25 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວກັບເຈົ້າວ່າ ໃຫ້ໄພ່ພົນຂອງ
ເຮົາທັງໝົດມາຈາກແດນໄກ.
26 ແລະ ໃຫ້ສົ່ງຜູ້ສົ່ງສານໄປຢ່າງວ່ອງ
ໄວ, ແທ້ຈິງແລ້ວ, ຜູ້ສົ່ງສານທີ່ໄດ້ເລືອກໄວ້
ແລ້ວ, ແລະ ໃຫ້ກ່າວກັບພວກເຂົາວ່າ: ມາ
ເຖີດ, ພ້ອມກັບຄຳທັງໝົດຂອງພວກເຈົ້າ,
ແລະ ເງິນຂອງພວກເຈົ້າ, ແລະ ເພັດນິນ
ຈິນດາຂອງພວກເຈົ້າ, ແລະ ວັດຖຸບູຮານ
ທັງໝົດຂອງພວກເຈົ້າ; ແລະ ພ້ອມກັບທຸກ
ຄົນທີ່ຮູ້ເລື່ອງວັດຖຸບູຮານ ທີ່ປະສົງຈະມາ,
ຍ່ອມມາໄດ້, ແລະ ນຳຕົ້ນບອກ, ແລະ ຕົ້ນ
ເຟີ, ແລະ ຕົ້ນແປກ, ພ້ອມກັບຕົ້ນໄມ້ທີ່ມີຄ່າ
ທຸກຕົ້ນຂອງແຜ່ນດິນໂລກ;
27 ແລະ ພ້ອມກັບເຫລັກ, ພ້ອມກັບທອງ
ແດງ, ແລະ ພ້ອມກັບທອງເຫລືອງ, ແລະ
ພ້ອມກັບສັງກະສີ, ແລະ ພ້ອມກັບຂອງ
ມີຄ່າຂອງເຈົ້າທັງໝົດໃນແຜ່ນດິນໂລກ;
ແລະ ສ້າງ ກບ້ານແດ່ນາມຂອງເຮົາ, ເພື່ອ
ພຣະຜູ້ສູງສຸດຈະໄດ້ ຂປະທັບຢູ່ໃນນັ້ນ.
28 ເພາະຈະບໍ່ມີສະຖານທີ່ໃດຢູ່ເທິງ
ແຜ່ນດິນໂລກທີ່ພຣະອົງຈະສະເດັດມາ
ແລະ ກຟື້ນຟູອີກເທື່ອໜຶ່ງສິ່ງຊຶ່ງໄດ້ສູນເສຍ
ໄປແລ້ວສຳລັບພວກເຈົ້າ, ຫລື ຊຶ່ງພຣະອົງ
ໄດ້ເອົາອອກໄປແລ້ວ, ແມ່ນແຕ່ຄວາມສົມ
ບູນຂອງຖານະປະໂລຫິດ.
29 ເພາະວ່າງ ກບັບຕິສະມາບໍ່ໄດ້ມີຢູ່ເທິງ
ແຜ່ນດິນໂລກ, ເພື່ອວ່າພວກເຂົາ, ໄພ່ພົນ

21 *ກ* ຄພ 41:9.
ຄມພ ອະທິການ.
22 *ກ* ຄພ 124:56–60.
23 *ກ* ພບຍ 31:12;
ມທ 25:35, 38.
*ຂ* ຄພ 124:2.
27 *ກ* ຄພ 109:5.
ຄມພ ພຣະວິຫານ, ບ້ານ
ຂອງພຣະຜູ້ເປັນເຈົ້າ.
*ຂ* ອພຍ 25:8;
ຄພ 97:15–17.
28 *ກ* ຄມພ ການຟື້ນຟູ
ພຣະກິດຕິຄຸນ.
29 *ກ* ຄພ 128:13.

ຂອງ ເຮົາ, ຈະ ໄດ້ ຮັບ [ຂ]ບັບຕິ ສະມາ ແທນ
ຄົນທີ່ໄດ້ລ່ວງລັບໄປແລ້ວ—
30 ເພາະ ວ່າ ພິທີ ການ ນີ້ ເປັນ ຂອງ ບ້ານ
ຂອງ ເຮົາ, ແລະ ຈະ ບໍ່ ເປັນ ທີ່ ຍອມ ຮັບ ຕໍ່
ເຮົາ, ຍົກ ເວັ້ນ ແຕ່ ໃນ ວັນ ເວລາ ແຫ່ງ ຄວາມ
ຍາກຈົນ, ຊຶ່ງ ໃນ ເວລາ ນັ້ນ ພວກ ເຈົ້າ ບໍ່ ສາ
ມາດສ້າງບ້ານໃຫ້ແກ່ເຮົາ.
31 ແຕ່ ເຮົາ ບັນຊາ ພວກ ເຈົ້າ, ພວກ ເຈົ້າ
ໄພ່ພົນທັງປວງຂອງເຮົາ, ຈົ່ງ [ກ]ສ້າງບ້ານ
ໃຫ້ແກ່ເຮົາ; ແລະ ເຮົາ ໄດ້ ໃຫ້ ເວລາ ພຽງ
ພໍ ແກ່ ພວກ ເຈົ້າ ທີ່ ຈະ ສ້າງ ບ້ານ ໃຫ້ ແກ່
ເຮົາ; ແລະ ລະຫວ່າງ ເວລາ ນີ້ ການ ບັບຕິ
ສະມາ ຂອງ ພວກ ເຈົ້າ ຈະ ເປັນ ທີ່ ຍອມ ຮັບ
ຕໍ່ເຮົາ.
32 ແຕ່ ຈົ່ງ ເບິ່ງ, ເມື່ອ ເວລາ ທີ່ ໄດ້ ກຳນົດ
ໄວ້ ສິ້ນ ສຸດ ລົງ ການ ບັບຕິ ສະມາ ແທນ ຄົນ
ຕາຍ ຂອງ ພວກ ເຈົ້າ ຈະ ບໍ່ ເປັນ ທີ່ ຍອມ ຮັບ
ຕໍ່ ເຮົາ; ແລະ ຖ້າ ຫາກ ພວກ ເຈົ້າ ບໍ່ ເຮັດ ສິ່ງ
ເຫລົ່ານີ້ກ່ອນເວລາທີ່ໄດ້ກຳນົດໄວ້ສິ້ນສຸດ
ລົງ, ແລ້ວ ພວກ ເຈົ້າ ຈະ ຖືກ ປະຕິເສດ ໃນ
ຖານະທີ່ເປັນສາດສະໜາຈັກ, ພ້ອມກັບຄົນ
ຕາຍ ຂອງ ພວກ ເຈົ້າ, ພຣະ ຜູ້ ເປັນ ເຈົ້າ ອົງ
ເປັນພຣະເຈົ້າຂອງພວກເຈົ້າໄດ້ກ່າວ.
33 ເພາະຕາມຄວາມຈິງແລ້ວ ເຮົາກ່າວ
ກັບ ພວກ ເຈົ້າ ວ່າ ຫລັງ ຈາກ ທີ່ ພວກ ເຈົ້າ ມີ
ເວລາພຽງພໍທີ່ຈະສ້າງບ້ານໃຫ້ແກ່ເຮົາ, ຊຶ່ງ
ພິທີການ ແຫ່ງ ການ ບັບຕິ ສະມາ ແທນ ຄົນ
ຕາຍເປັນຂອງບ້ານແຫ່ງນີ້, ແລະ ພິທີການ
ດຽວກັນນີ້ໄດ້ຖືກແຕ່ງຕັ້ງໄວ້ແຕ່ກ່ອນການ
ວາງຮາກຖານຂອງໂລກ, ການບັບຕິສະມາ
ຂອງພວກເຈົ້າແທນຄົນຕາຍຂອງພວກເຈົ້າ
ຈະບໍ່ເປັນທີ່ຍອມຮັບຕໍ່ເຮົາ;
34 ເພາະໃນນັ້ນມີ [ກ]ຂໍກະແຈຂອງຖານະ
ປະໂລຫິດສັກສິດຖືກແຕ່ງຕັ້ງໄວ້, ເພື່ອວ່າ
ພວກເຈົ້າຈະໄດ້ຮັບກຽດຕິຍົດ ແລະ ລັດສະ
ໝີພາບ.
35 ແລະ ຫລັງຈາກເວລານີ້, ບັບຕິສະມາ
ຂອງ ພວກ ເຈົ້າ ແທນ ຄົນ ຕາຍ, ໂດຍ ຄົນ ທີ່
ກະ ຈັດ ກະ ຈາຍ ກັນ ຢູ່ ທົ່ວ ໄປ, ຈະ ບໍ່ ເປັນ ທີ່
ຍອມຮັບຕໍ່ເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.
36 ເພາະ ວ່າ ມີ ການ ແຕ່ງ ຕັ້ງ ໄວ້ ວ່າ ໃນ
ຊີໂອນ, ແລະ ໃນ ສະເຕກ ຂອງ ນາງ, ແລະ
ໃນ ເຢຣູ ຊາເລັມ, ສະຖານ ທີ່ ເຫລົ່າ ນັ້ນ
ຊຶ່ງ ເຮົາ ກຳນົດ ໃຫ້ ເປັນ [ກ]ທີ່ພັກ, ຈະ ເປັນ
ສະຖານທີ່ເພື່ອການບັບຕິສະມາຂອງພວກ
ເຈົ້າ ແທນຄົນຕາຍຂອງພວກເຈົ້າ.
37 ແລະ ອີກ ເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາ ກ່າວ ກັບ ພວກ ເຈົ້າ ວ່າ [ກ]ການ
ຊຳລະລ້າງຂອງພວກເຈົ້າຈະເປັນທີ່ຍອມ
ຮັບ ຕໍ່ ເຮົາ ໄດ້ ແນວ ໃດ, ຍົກ ເວັ້ນ ແຕ່ ພວກ
ເຈົ້າຈະປະຕິບັດມັນຢູ່ໃນບ້ານທີ່ພວກເຈົ້າ
ສ້າງແດ່ນາມຂອງເຮົາ?
38 ເພາະ, ດ້ວຍເຫດນີ້ ເຮົາຈຶ່ງໄດ້ບັນຊາ
ໂມເຊໃຫ້ສ້າງ [ກ]ສະຖານທີ່ນະມັດສະການ,
ເພື່ອ ວ່າ ພວກ ເຂົາ ຈະ ໄດ້ ແບກ ມັນ ໄປ ກັບ
ພວກເຂົາໃນຖິ່ນແຫ້ງແລ້ງກັນດານ, ແລະ
ໃຫ້ສ້າງ [ຂ]ບ້ານໃນແຜ່ນດິນແຫ່ງຄຳສັນຍາ,
ເພື່ອວ່າຈະໄດ້ເປີດເຜີຍພິທີການເຫລົ່ານັ້ນ
ຊຶ່ງ ໄດ້ ເຊື່ອງ ຊ້ອນ ໄວ້ ຕັ້ງ ແຕ່ ກ່ອນ ໂລກ ມີ
ມາ.

---

29 *ຂ* 1 ກຣທ 15:29; ຄພ 127:6; 138:33. ຄມພ ຄວາມລອດສຳລັບຄົນຕາຍ; ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາແທນຄົນຕາຍ.
31 *ກ* ຄພ 97:10.
34 *ກ* ຄພ 110:14–16. ຄມພ ຂໍກະແຈຂອງຖານະປະໂລຫິດ.
36 *ກ* ອຊຢ 4:5–6.
37 *ກ* ຄມພ ຊຳລະລ້າງ, ຖືກຊຳລະລ້າງ, ການຊຳລະລ້າງ.
38 *ກ* ອພຍ 25:1–9; 33:7. ຄມພ ສະຖານທີ່ນະມັດສະການ.
*ຂ* ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.

39 ສະນັ້ນ, ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວກັບພວກເຈົ້າວ່າ [ກ]ການເຈີມຂອງພວກ ເຈົ້າ, ແລະ ການຊຳລະລ້າງຂອງພວກເຈົ້າ, ແລະ [ຂ]ການບັບຕິສະມາຂອງພວກເຈົ້າ ແທນຄົນຕາຍ, ແລະ [ຄ]ການຊຸມນຸມທີ່ສັກ ສິດຂອງພວກເຈົ້າ, ແລະ ພິທີການຂອງ ພວກເຈົ້າສຳລັບ [ງ]ການຖວາຍເຄື່ອງບູຊາ ໂດຍພວກລູກຊາຍຂອງເລວີ, ແລະ ການ ເປີດເຜີຍຂອງພວກເຈົ້າໃນ [ຈ]ສະຖານທີ່ ທີ່ ສັກສິດທີ່ສຸດ ຊຶ່ງໃນນັ້ນພວກເຈົ້າໄດ້ຮັບ ຄຳສົນທະນາ, ແລະ ຂໍ້ກຳນົດ ແລະ ການ ພິພາກສາຂອງພວກເຈົ້າ, ສຳລັບການເລີ່ມ ຕົ້ນຂອງການເປີດເຜີຍ ແລະ ຮາກຖານ ຂອງຊີໂອນ, ແລະ ສຳລັບລັດສະໝີພາບ, ກຽດຕິຍົດ, ແລະ ຂອງປະທານສັກສິດຂອງ ພົນລະເມືອງທັງໝົດຂອງນາງ, ຖືກແຕ່ງຕັ້ງ ໂດຍພິທີການໃນບ້ານອັນສັກສິດຂອງເຮົາ, ຊຶ່ງຜູ້ຄົນຂອງເຮົາໄດ້ຖືກບັນຊາຢູ່ສະເໝີ ໃຫ້ສ້າງແດ່ນາມອັນສັກສິດຂອງເຮົາ.

40 ແລະ ຕາມຄວາມຈິງແລ້ວ ເຮົາກ່າວ ກັບພວກເຈົ້າວ່າ ໃຫ້ບ້ານນີ້ຖືກສ້າງຂຶ້ນ ແດ່ນາມຂອງເຮົາ, ເພື່ອວ່າເຮົາຈະໄດ້ເປີດ ເຜີຍພິທີການຂອງເຮົາໃນນັ້ນໃຫ້ແກ່ຜູ້ຄົນ ຂອງເຮົາ;

41 ເພາະ ເຮົາ ເຫັນ ວ່າ ສົມ ຄວນ ທີ່ ຈະ [ກ]ເປີດເຜີຍຕໍ່ສາດສະໜາຈັກຂອງເຮົາ ເຖິງ ສິ່ງທີ່ຖືກ [ຂ]ເຊື່ອງຊ້ອນໄວ້ນັບແຕ່ກ່ອນການ ວາງຮາກຖານຂອງໂລກ, ສິ່ງທີ່ກ່ຽວກັບຍຸກ ສະໄໝຂອງ [ຄ]ຄວາມສົມບູນແຫ່ງເວລາ.

42 ແລະ [ກ]ເຮົາຈະສະແດງໃຫ້ຜູ້ຮັບໃຊ້ ຂອງເຮົາ ໂຈເຊັບ ເຫັນທຸກສິ່ງທັງປວງກ່ຽວ ກັບບ້ານຫລັງນີ້, ແລະ ຖານະປະໂລຫິດໃນ ນັ້ນ, ແລະ ສະຖານທີ່ ທີ່ມັນຈະຖືກສ້າງຂຶ້ນ.

43 ແລະ ພວກເຈົ້າຈະສ້າງມັນໃນ ສະຖານທີ່ຊຶ່ງພວກເຈົ້າໄດ້ຄິດໄຕ່ຕອງທີ່ ຈະສ້າງມັນ, ເພາະວ່ານັ້ນເປັນບ່ອນທີ່ເຮົາ ໄດ້ເລືອກໄວ້ໃຫ້ພວກເຈົ້າເພື່ອສ້າງມັນ.

44 ຖ້າພວກເຈົ້າທຳງານດ້ວຍສຸດກຳລັງ ຂອງພວກເຈົ້າ, ເຮົາຈະອຸທິດຖວາຍບ່ອນ ນັ້ນ ເພື່ອວ່າມັນຈະຖືກເຮັດໃຫ້ [ກ]ສັກສິດ.

45 ແລະ ຖ້າຫາກຜູ້ຄົນຂອງເຮົາຈະເຊື່ອ ຟັງສຽງຂອງເຮົາ, ແລະ ສຽງຂອງ [ກ]ຜູ້ຮັບ ໃຊ້ຂອງເຮົາ ຜູ້ຊຶ່ງເຮົາໄດ້ກຳນົດໄວ້ໃຫ້ນຳ ພາຜູ້ຄົນຂອງເຮົາ, ຈົ່ງເບິ່ງ, ຕາມຄວາມຈິງ ແລ້ວ, ເຮົາກ່າວກັບພວກເຈົ້າວ່າ ພວກເຂົາ ຈະບໍ່ຖືກຍ້າຍອອກຈາກສະຖານທີ່ຂອງ ພວກເຂົາ.

46 ແຕ່ຖ້າຫາກພວກເຂົາບໍ່ເຊື່ອຟັງສຽງ ຂອງເຮົາ, ຫລື ສຽງຂອງຜູ້ຊາຍເຫລົ່ານີ້ ຜູ້ ຊຶ່ງເຮົາໄດ້ກຳນົດໄວ້, ແລ້ວພວກເຂົາຈະບໍ່ ໄດ້ຮັບພອນ, ເພາະວ່າພວກເຂົາໄດ້ເຮັດ ໃຫ້ພື້ນທີ່ສັກສິດມີມົນທິນ, ແລະ ພິທີການທີ່ ສັກສິດຂອງເຮົາ, ແລະ ກົດ, ແລະ ຖ້ອຍຄຳ ທີ່ສັກສິດຂອງເຮົາ ຊຶ່ງເຮົາໄດ້ມອບໃຫ້ແກ່ ພວກເຈົ້າ.

47 ແລະ ເຫດການຈະບັງເກີດຂຶ້ນຄື ຖ້າ ຫາກພວກເຈົ້າສ້າງບ້ານແດ່ນາມຂອງເຮົາ, ແລະ ບໍ່ເຮັດສິ່ງທີ່ເຮົາກ່າວ, ເຮົາຈະບໍ່ປະຕິ ບັດຕາມ [ກ]ຄຳສາບານ ຊຶ່ງເຮົາໄດ້ເຮັດກັບ ພວກເຈົ້າ, ທັງບໍ່ເຮັດໃຫ້ຄຳສັນຍາທີ່ພວກ

39 *ກ* ອພຍ 29:7. ຄມພ ເຈີມ, ການເຈີມ.
*ຂ* ຄມພ ພິທີການ—ພິທີການກະທຳແທນ.
*ຄ* ຄພ 88:117.
*ງ* ຄພ 13; 84:31; 128:24; ຈສ—ປ 1:69.
*ຈ* ອຊກ 41:4; ຄພ 45:32; 87:8; 101:22.
41 *ກ* ຫຼຊ 1:9.
*ຂ* ຄພ 121:26–32.
*ຄ* ອຟຊ 1:9–10; ຄພ 27:13; 112:30.
42 *ກ* ຄພ 95:14–17.
44 *ກ* ຄມພ ສັກສິດ, ຄວາມສັກສິດ.
45 *ກ* ຄພ 1:38. ຄມພ ສາດສະດາ.
47 *ກ* ຄມພ ຄຳສາບານ.

ເຈົ້າຫວັງຈາກມືຂອງເຮົາສຳເລັດຜົນ, ພຣະ
ຜູ້ເປັນເຈົ້າໄດ້ກ່າວ.
48 ເພາະ [ກ]ແທນທີ່ຈະໄດ້ຮັບພອນ, ພວກ
ເຈົ້າ, ໂດຍວຽກງານຂອງພວກເຈົ້າເອງ, ຈະ
ນຳການສາບແຊ່ງ, ພຣະພິໂລດ, ຄວາມ
ເຄືອງແຄ້ນ, ແລະ ການພິພາກສາ ມາໃສ່
ຫົວຂອງພວກເຈົ້າເອງ, ໂດຍຄວາມໂງ່ຈ້າ
ຂອງພວກເຈົ້າ, ແລະ ໂດຍຄວາມໜ້າກຽດ
ຊັງທັງປວງຂອງພວກເຈົ້າ, ຊຶ່ງພວກເຈົ້າປະ
ຕິບັດຢູ່ຕໍ່ໜ້າເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.
49 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບ
ພວກເຈົ້າ, ວ່າເມື່ອເຮົາມອບບັນຍັດໃຫ້ແກ່
ບຸດຄົນໃດຂອງມະນຸດເພື່ອໃຫ້ເຮັດວຽກ
ງານແດ່ນາມຂອງເຮົາ, ແລະ ບຸດເຫລົ່າ
ນັ້ນຂອງມະນຸດເຮັດດ້ວຍສຸດກຳລັງຂອງ
ພວກເຂົາ ແລະ ດ້ວຍທຸກສິ່ງທີ່ພວກເຂົາ
ມີ ເພື່ອເຮັດວຽກງານນັ້ນ, ແລະ ບໍ່ລົດລະ
[ກ]ຄວາມພາກພຽນຂອງພວກເຂົາ, ແລະ
ສັດຕູຂອງພວກເຂົາມາໂຈມຕີພວກເຂົາ
ແລະ ຂັດຂວາງພວກເຂົາຈາກການເຮັດ
ວຽກງານນັ້ນ, ຈົ່ງເບິ່ງ, ເຮົາເຫັນສົມຄວນທີ່
ຈະບໍ່ [ຂ]ຮຽກຮ້ອງວຽກງານນັ້ນອີກຕໍ່ໄປຈາກ
ມືຂອງບຸດເຫລົ່ານັ້ນຂອງມະນຸດ, ແຕ່ຈະ
ຍອມຮັບເຄື່ອງຖວາຍຂອງພວກເຂົາ.
50 ແລະ ຄວາມຊົ່ວຮ້າຍ ແລະ ການລ່ວງ
ລະເມີດກົດ ແລະ ບັນຍັດທີ່ສັກສິດຂອງ
ເຮົາ, ເຮົາຈະມາ [ກ]ຢ້ຽມຢາມເທິງຫົວຂອງ
ຜູ້ຄົນເຫລົ່ານັ້ນທີ່ຂັດຂວາງວຽກງານຂອງ
ເຮົາ, ຈົນເຖິງຄົນ [ຂ]ລຸ້ນທີສາມ ແລະ ທີສີ່,
ຕາບໃດທີ່ພວກເຂົາ [ຄ]ບໍ່ກັບໃຈ, ແລະ ກຽດ
ຊັງເຮົາ, ອົງພຣະຜູ້ເປັນເຈົ້າໄດ້ກ່າວ.
51 ສະນັ້ນ, ເພາະດ້ວຍເຫດນີ້, ເຮົາຈຶ່ງ
ຍອມຮັບເຄື່ອງຖວາຍຂອງຄົນເຫລົ່ານັ້ນ ຜູ້
ເຮົາໄດ້ບັນຊາໃຫ້ສ້າງເມືອງ ແລະ [ກ]ບ້ານ
ແດ່ນາມຂອງເຮົາ, ໃນ [ຂ]ເຂດແຈ໊ກສັນ, ລັດ
ມີເຊີຣີ, ແລະ ຖືກຂັດຂວາງໂດຍສັດຕູຂອງ
ພວກເຂົາ, ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າໄດ້ກ່າວ.
52 ແລະ ເຮົາຈະຕອບ [ກ]ການພິພາກ
ສາ, ພຣະພິໂລດ, ແລະ ຄວາມເຄືອງແຄ້ນ,
ການຄວນຄາງ, ແລະ ຄວາມເຈັບປວດ,
ແລະ ການຂົບແຂ້ວຄ້ຽວຟັນຢູ່ເທິງຫົວຂອງ
ພວກເຂົາ, ຈົນເຖິງຄົນລຸ້ນທີສາມ ແລະ ທີ
ສີ່, ຕາບໃດທີ່ພວກເຂົາບໍ່ກັບໃຈ, ແລະ
ກຽດຊັງເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າໄດ້ກ່າວ.
53 ແລະ ການນີ້ ເຮົາເຮັດໄປເພື່ອເປັນ
ຕົວຢ່າງໃຫ້ແກ່ພວກເຈົ້າ, ເພື່ອການປອບ
ໃຈຂອງພວກເຈົ້າກ່ຽວກັບທຸກຄົນຜູ້ໄດ້
ຖືກບັນຊາໃຫ້ເຮັດວຽກງານ ແລະ ຖືກຂັດ
ຂວາງໂດຍມືຂອງສັດຕູຂອງພວກເຂົາ,
ແລະ ໂດຍການກົດຂີ່, ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງເຈົ້າໄດ້ກ່າວ.
54 ເພາະເຮົາຄືພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຈົ້າ, ແລະ ຈະຊ່ວຍ
ເຫລືອອ້າຍເອື້ອຍນ້ອງທຸກຄົນຂອງພວກ
ເຈົ້າຜູ້ທີ່ມີໃຈ [ກ]ບໍລິສຸດ, ແລະ ໄດ້ຖືກ [ຂ]ຂ້າ
ໃນແຜ່ນດິນລັດມີເຊີຣີ, ພຣະຜູ້ເປັນເຈົ້າໄດ້
ກ່າວ.
55 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ເຮົາບັນຊາ
ພວກເຈົ້າອີກໃຫ້ສ້າງ [ກ]ບ້ານແດ່ນາມຂອງ

48 ກ ພບຍ 28:15.
49 ກ ຄມພ ພາກພຽນ, ຄວາມພາກພຽນ.
ຂ ຄພ 56:4; 137:9.
50 ກ ມຊຢ 12:1.
ຂ ພບຍ 5:9; ຄພ 98:46–47.
ຄ ຄມພ ກັບໃຈ, ການກັບໃຈ.
51 ກ ຄພ 115:11.
ຂ ຄມພ ເຂດແຈ໊ກສັນ, ລັດມີເຊີຣີ (ສະຫະລັດອາເມຣິກາ).
52 ກ ຄພ 121:11–23.
54 ກ ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
ຂ ຄພ 98:13; 103:27–28.
55 ກ ຄພ 127:4.

ເຮົາ, ແມ່ນແຕ່ໃນບ່ອນນີ້, ເພື່ອວ່າພວກ
ເຈົ້າຈະໄດ້ [ຂ]ພິສູດຕົນເອງຕໍ່ເຮົາ ວ່າພວກ
ເຈົ້າຊື່ສັດໃນທຸກສິ່ງທັງປວງອັນໃດກໍຕາມ
ທີ່ເຮົາບັນຊາພວກເຈົ້າ, ເພື່ອວ່າເຮົາຈະໄດ້
ໃຫ້ພອນແກ່ພວກເຈົ້າ, ແລະ ສວມມົງກຸດ
ພວກເຈົ້າດ້ວຍກຽດຕິຍົດ, ຄວາມເປັນອະ
ມະຕະ, ແລະ ຊີວິດນິລັນດອນ.
56 ແລະ ບັດນີ້ເຮົາກ່າວກັບພວກເຈົ້າ,
ກ່ຽວກັບ [ກ]ບ້ານພັກ ຊຶ່ງເຮົາໄດ້ບັນຊາພວກ
ເຈົ້າໃຫ້ສ້າງເພື່ອໃຫ້ຄົນຕ່າງດ້າວໄດ້ພັກ
ເຊົາ, ໃຫ້ສ້າງມັນແດ່ນາມຂອງເຮົາ, ແລະ
ໃຫ້ນາມຂອງເຮົາຢູ່ເທິງນັ້ນ, ແລະ ໃຫ້ຜູ້ຮັບ
ໃຊ້ຂອງເຮົາ ໂຈເຊັບ ແລະ ຄົວເຮືອນຂອງ
ລາວມີທີ່ຢູ່ໃນນັ້ນ, ຈາກລຸ້ນສູ່ລຸ້ນ.
57 ເພາະເຮົາໄດ້ມອບການເຈີມນີ້ໄວ້ເທິງ
ຫົວຂອງລາວ, ວ່າພອນຂອງລາວຈະຖືກ
ໃຫ້ໄວ້ເທິງຫົວຂອງລູກຫລານຂອງລາວ
ຫລັງຈາກລາວ.
58 ແລະ ເຮົາໄດ້ກ່າວກັບ [ກ]ອັບຣາຮາມ
ກ່ຽວກັບຕະກຸນຂອງແຜ່ນດິນໂລກສັນໃດ,
ເຮົາກໍກ່າວກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ສັນນັ້ນວ່າ: ຜ່ານເຈົ້າ ແລະ ຜ່ານ [ຂ]ລູກ
ຫລານຂອງເຈົ້າ ຕະກຸນຂອງແຜ່ນດິນໂລກ
ຈະໄດ້ຮັບພອນ.
59 ສະນັ້ນ, ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ແລະ ລູກຫລານຂອງລາວຫລັງຈາກ
ລາວມີບ່ອນຢູ່ໃນບ້ານນັ້ນ, ຈາກລຸ້ນສູ່ລຸ້ນ,
ຕະຫລອດການ ແລະ ຕະຫລອດໄປ, ພຣະ
ຜູ້ເປັນເຈົ້າໄດ້ກ່າວ.
60 ແລະ ໃຫ້ຊື່ຂອງບ້ານນັ້ນຖືກເອີ້ນວ່າ
ບ້ານນາວູ; ແລະ ໃຫ້ມັນເປັນບ່ອນພັກພາ
ອາໄສທີ່ເບີກບານໃຈສຳລັບມະນຸດ, ແລະ
ເປັນສະຖານທີ່ພັກຜ່ອນສຳລັບຄົນເດີນ
ທາງທີ່ອິດເມື່ອຍ, ເພື່ອວ່າເຂົາຈະໄຕ່ຕອງ
ເຖິງລັດສະໝີພາບຂອງຊີໂອນ, ແລະ ລັດ
ສະໝີພາບຂອງທີ່ນີ້, ຫີນເສົາເອກຂອງມັນ;
61 ເພື່ອວ່າເຂົາຈະໄດ້ຮັບຄຳແນະນຳ
ຈາກຄົນເຫລົ່ານັ້ນຜູ້ທີ່ເຮົາໄດ້ຕັ້ງໄວ້ເປັນ
ດັ່ງ [ກ]ພືດພັນທີ່ມີຊື່ສຽງ, ແລະ ເປັນດັ່ງ [ຂ]ຄົນ
ຍາມຢູ່ເທິງກຳແພງຂອງນາງ.
62 ຈົ່ງເບິ່ງ, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ
ຈອດ ມຽວເລີ, ແລະ ຜູ້ຮັບໃຊ້ຂອງເຮົາ ໄລ
ມັນ ໄວ້, ແລະ ຜູ້ຮັບໃຊ້ຂອງເຮົາ ຈອນ ສະ
ໄນເດີ, ແລະ ຜູ້ຮັບໃຊ້ຂອງເຮົາ ພີເຕີ ຮໍສ໌,
ວາງລະບຽບຂອງພວກເຂົາເອງ, ແລະ ກຳ
ນົດຄົນໜຶ່ງໃນພວກເຂົາໃຫ້ເປັນປະທານ
ດູແລກຸ່ມຂອງພວກເຂົາເພື່ອຈຸດປະສົງໃນ
ການສ້າງບ້ານນັ້ນ.
63 ແລະ ພວກເຂົາຈະຕ້ອງຕັ້ງກົດຂຶ້ນ,
ຊຶ່ງໂດຍການນີ້ ພວກເຂົາຈະໄດ້ຮັບຫຸ້ນ
ເພື່ອການສ້າງບ້ານນັ້ນ.
64 ແລະ ພວກເຂົາຈະບໍ່ໄດ້ຮັບໜ້ອຍ
ກວ່າຫ້າສິບໂດລາສຳລັບຫຸ້ນໜຶ່ງໃນບ້ານ
ນັ້ນ, ແລະ ພວກເຂົາຈະໄດ້ຮັບອະນຸຍາດ
ໃຫ້ຮັບເອົາໜຶ່ງໝື່ນຫ້າພັນໂດລາຈາກຄົນ
ໃດຄົນໜຶ່ງເປັນຄ່າຫຸ້ນໃນບ້ານນັ້ນ.
65 ແຕ່ພວກເຂົາຈະບໍ່ໄດ້ຮັບອະນຸຍາດ
ໃຫ້ຮັບເອົາຫລາຍກວ່າໜຶ່ງໝື່ນຫ້າພັນໂດ
ລາຈາກຄົນໃດຄົນໜຶ່ງເປັນຄ່າຫຸ້ນ.
66 ແລະ ພວກເຂົາຈະບໍ່ໄດ້ຮັບອະນຸ
ຍາດໃຫ້ຮັບເອົາໜ້ອຍກວ່າຫ້າສິບໂດລາ
ຈາກຄົນໃດຄົນໜຶ່ງເປັນຄ່າຫຸ້ນໃນບ້ານ
ນັ້ນ.

55 *ຂ* ອຣຣ 3:25.
56 *ກ* ຄພ 124:22–24.
58 *ກ* ປຖກ 12:3; 22:18; ອຣຣ 2:11. ຄນພ ອັບຣາຮາມ.
*ຂ* ຄພ 110:12. ຄນພ ພັນທະສັນຍາຂອງອັບຣາຮາມ.
61 *ກ* ອຊຢ 61:3; ອຊກ 34:29.
*ຂ* ຄນພ ຍາມ, ຄົນຍາມ.

67 ແລະ ພວກ ເຂົາ ຈະ ບໍ່ ໄດ້ ຮັບ ອະ ນຸ
ຍາດໃຫ້ຮັບເອົາຄົນໃດຄົນໜຶ່ງ, ເປັນຜູ້ຖື
ຫຸ້ນໃນບ້ານນີ້, ຍົກເວັ້ນແຕ່ຄົນດຽວກັນນັ້ນ
ຈະຈ່າຍຄ່າຫຸ້ນໄວ້ໃນມືຂອງພວກເຂົາໃນ
ເວລາທີ່ເຂົາຮັບເອົາຫຸ້ນ;
68 ແລະ ຕາມສັດສ່ວນຂອງຈຳນວນເງິນ
ຄ່າຫຸ້ນທີ່ເຂົາຈ່າຍໄວ້ໃນມືຂອງພວກເຂົາ,
ເຂົາຈະໄດ້ຮັບຫຸ້ນໃນບ້ານນັ້ນ; ແຕ່ຖ້າຫາກ
ເຂົາບໍ່ຈ່າຍໄວ້ໃນມືຂອງພວກເຂົາ, ແລ້ວ
ເຂົາຈະບໍ່ໄດ້ຮັບຫຸ້ນໃດໆໃນບ້ານນັ້ນ.
69 ແລະ ຖ້າຫາກຄົນໃດກໍຕາມທີ່ໄດ້
ຈ່າຍຄ່າຫຸ້ນໄວ້ໃນມືຂອງພວກເຂົາ ມັນຈະ
ເປັນຄ່າຫຸ້ນໃນບ້ານນັ້ນ, ສຳລັບຕົວເຂົາ,
ແລະ ສຳລັບລູກຫລານລຸ້ນຫລັງຈາກເຂົາ,
ຈາກລຸ້ນສູ່ລຸ້ນ, ຕາບໃດທີ່ເຂົາ ແລະ ທາ
ຍາດຂອງເຂົາຈະຖືຫຸ້ນນັ້ນຢູ່, ແລະ ບໍ່ຂາຍ
ຫລື ນຳຫຸ້ນໄປຈາກມືຂອງພວກເຂົາໂດຍ
ຄວາມເຕັມໃຈ ແລະ ການກະທຳຂອງພວກ
ເຂົາເອງ, ຖ້າຫາກພວກເຈົ້າຈະເຮັດຕາມ
ຄວາມປະສົງຂອງເຮົາ, ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຈົ້າໄດ້ກ່າວ.
70 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກ
ຜູ້ຮັບໃຊ້ຂອງເຮົາ ຈອດ ມຽວເລີ, ແລະ ຜູ້
ຮັບໃຊ້ຂອງເຮົາ ໄລມັນ ໄວ້, ແລະ ຜູ້ຮັບໃຊ້
ຂອງເຮົາ ຈອນ ສະໄນເດີ, ແລະ ຜູ້ຮັບໃຊ້
ຂອງເຮົາ ພີເຕີ ຮໍສ໌, ໄດ້ຮັບຫຸ້ນໃດໄວ້ໃນມື
ຂອງພວກເຂົາ, ເປັນເງິນ, ຫລື ເປັນຊັບສິນ
ຊຶ່ງໃນນັ້ນ ພວກເຂົາໄດ້ຮັບຕາມມູນຄ່າແທ້
ຂອງເງິນ, ພວກເຂົາຈະບໍ່ນຳສ່ວນໃດສ່ວນ
ໜຶ່ງຂອງຄ່າຫຸ້ນນັ້ນໄປເພື່ອເຮັດຈຸດປະສົງ
ອື່ນໃດ, ຍົກເວັ້ນແຕ່ໃນບ້ານນັ້ນ.
71 ແລະ ຖ້າຫາກພວກເຂົານຳເອົາສ່ວນ
ໃດສ່ວນໜຶ່ງຂອງຫຸ້ນນັ້ນໄປບ່ອນອື່ນ, ຍົກ
ເວັ້ນແຕ່ໃນບ້ານນັ້ນ, ໂດຍປາດສະຈາກ
ການຍິນຍອມຂອງຜູ້ຖືຫຸ້ນ, ແລະ ບໍ່ຈ່າຍ
ຄືນໃຫ້ສີ່ເທົ່າສຳລັບຫຸ້ນທີ່ພວກເຂົາໄດ້
ເອົາໄປບ່ອນອື່ນ, ຍົກເວັ້ນແຕ່ໃນບ້ານນັ້ນ,
ແລ້ວພວກເຂົາຈະຖືກສາບແຊ່ງ, ແລະ ຈະ
ຖືກຍ້າຍອອກຈາກຕຳແໜ່ງຂອງພວກເຂົາ,
ອົງພຣະຜູ້ເປັນເຈົ້າໄດ້ກ່າວ; ເພາະເຮົາ,
ພຣະຜູ້ເປັນເຈົ້າ, ຄືພຣະເຈົ້າ, ແລະ ຈະຖືກ
[ກ]ເຍາະເຍີ້ຍບໍ່ໄດ້ໃນເລື່ອງໃດກໍຕາມໃນ
ເລື່ອງເຫລົ່ານີ້.
72 ຕາມ ຄວາມ ຈິງ ແລ້ວ ເຮົາ ກ່າວ ກັບ
ພວກເຈົ້າ, ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ຈ່າຍຄ່າຫຸ້ນໄວ້ໃນມືຂອງພວກເຂົາເພື່ອ
ການສ້າງບ້ານນັ້ນ, ຕາມທີ່ລາວເຫັນວ່າດີ;
ແຕ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ບໍ່ສາມາດ
ຈ່າຍຄ່າຫຸ້ນເກີນກວ່າໜຶ່ງໝື່ນຫ້າພັນໂດ
ລາໃນບ້ານນັ້ນ, ຫລື ໜ້ອຍກວ່າຫ້າສິບໂດ
ລາກໍບໍ່ໄດ້; ທັງຄົນອື່ນໃດກໍເຮັດບໍ່ໄດ້, ພຣະ
ຜູ້ເປັນເຈົ້າໄດ້ກ່າວ.
73 ແລະ ມີຄົນອື່ນໆນຳອີກຜູ້ທີ່ຢາກຮູ້
ຄວາມປະສົງຂອງເຮົາກ່ຽວກັບພວກເຂົາ,
ເພາະວ່າພວກເຂົາໄດ້ຂໍສິ່ງນີ້ຈາກມືເຮົາ.
74 ສະນັ້ນ, ເຮົາກ່າວກັບພວກເຈົ້າກ່ຽວ
ກັບຜູ້ຮັບໃຊ້ຂອງເຮົາ ວິນສັນ ໄນ້, ຖ້າຫາກ
ລາວຈະເຮັດຕາມຄວາມປະສົງຂອງເຮົາ,
ກໍໃຫ້ລາວຊື້ຫຸ້ນໃນບ້ານນັ້ນສຳລັບຕົວລາວ
ເອງ, ແລະ ສຳລັບລູກຫລານຂອງລາວ
ຫລັງຈາກລາວ, ຈາກລຸ້ນສູ່ລຸ້ນ.
75 ແລະ ໃຫ້ລາວ ເປັ່ງສຽງຂອງລາວ
ໃຫ້ດົນນານ ແລະ ດັງ, ໃນທ່າມກາງຜູ້
ຄົນ, ເພື່ອ [ກ]ອ້ອນວອນສິດທິຂອງຄົນຍາກ
ຈົນ ແລະ ຄົນຂັດສົນ; ແລະ ບໍ່ໃຫ້ລາວລົ້ມ
ເຫລວ, ທັງບໍ່ໃຫ້ລາວທໍ້ຖອຍໃຈ; ແລະ ເຮົາ
ຈະ [ຂ]ຍອມຮັບເອົາເຄື່ອງຖວາຍຂອງລາວ,

71 *ກ* ຄລຕ 6:7.
75 *ກ* ສພສ 31:9.
*ຂ* ປຖກ 4:4–5;
ມຊ 5:18–28.

ເພາະມັນຈະບໍ່ເກີດຂຶ້ນກັບເຮົາເໝືອນດັ່ງ
ເຄື່ອງຖວາຍຂອງກາອິນ, ເພາະ ລາວຈະ
ເປັນຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

76 ໃຫ້ຄອບຄົວຂອງລາວປິຕິຍິນດີ ແລະ
ຫັນໃຈຂອງພວກເຂົາໄປຈາກຄວາມທຸກ
ຍາກລຳບາກ; ເພາະເຮົາໄດ້ເລືອກລາວ
ແລະ ໄດ້ເຈີມລາວ, ແລະ ລາວຈະໄດ້ຮັບ
ກຽດໃນທ່າມກາງຄົວເຮືອນຂອງລາວ,
ເພາະເຮົາຈະໃຫ້ອະໄພບາບທັງໝົດຂອງ
ລາວ, ພຣະຜູ້ເປັນເຈົ້າໄດ້ກ່າວ. ອາແມນ.

77 ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ ໄຮຣຳ
ຊື້ຫຸ້ນໃນບ້ານນັ້ນ ຕາມທີ່ລາວເຫັນວ່າດີ,
ສຳລັບຕົວລາວເອງ ແລະ ລູກຫລານຂອງ
ລາວຫລັງຈາກລາວ, ຈາກລຸ້ນສູ່ລຸ້ນ.

78 ໃຫ້ຜູ້ຮັບໃຊ້ຂອງເຮົາ ໄອເຊັກ ກາ
ແລນ ຊື້ຫຸ້ນໃນບ້ານນັ້ນ; ເພາະເຮົາ, ພຣະ
ຜູ້ເປັນເຈົ້າ, ຮັກລາວເພາະວຽກງານທີ່ລາວ
ໄດ້ເຮັດ, ແລະ ຈະໃຫ້ອະໄພບາບທັງໝົດ
ຂອງລາວ; ສະນັ້ນ, ໃຫ້ລາວຖືກຈື່ຈຳວ່າມີ
ລາຍໄດ້ໃນບ້ານນັ້ນຈາກລຸ້ນສູ່ລຸ້ນ.

79 ໃຫ້ ຜູ້ຮັບໃຊ້ຂອງເຮົາ ໄອເຊັກ ກາ
ແລນ ຖືກກຳນົດໄວ້ໃນບັນດາພວກເຈົ້າ,
ແລະ ຖືກແຕ່ງຕັ້ງໂດຍຜູ້ຮັບໃຊ້ຂອງເຮົາ
ວິວລຽມ ມາກສ໌, ແລະ ໄດ້ຮັບພອນຈາກ
ລາວ, ເພື່ອຈະໄປກັບຜູ້ຮັບໃຊ້ຂອງເຮົາ
ໄຮຣຳ ເພື່ອບັນລຸວຽກງານທີ່ຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ ຈະຊີ້ໃຫ້ພວກເຂົາເຫັນ,
ແລະ ພວກເຂົາຈະໄດ້ຮັບພອນຢ່າງຫລວງ
ຫລາຍ.

80 ໃຫ້ຜູ້ຮັບໃຊ້ຂອງເຮົາ ວິວລຽມ ມາກສ໌
ຈ່າຍຄ່າຫຸ້ນໄວ້ໃນບ້ານນັ້ນ, ຕາມທີ່ລາວ
ເຫັນວ່າດີ, ສຳລັບຕົວລາວເອງ ແລະ ລູກ
ຫລານຂອງລາວ, ຈາກລຸ້ນສູ່ລຸ້ນ.

81 ໃຫ້ຜູ້ຮັບໃຊ້ຂອງເຮົາ ເຮັນຣີ ຈີ ເຊີ
ວູດ ຈ່າຍຄ່າຫຸ້ນໄວ້ໃນບ້ານນັ້ນ, ຕາມທີ່
ລາວເຫັນວ່າດີ, ສຳລັບຕົວລາວເອງ ແລະ
ລູກຫລານຂອງລາວຫລັງຈາກລາວ, ຈາກ
ລຸ້ນສູ່ລຸ້ນ

82 ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ ວິວລຽມ ລໍ
ຈ່າຍ ຄ່າຫຸ້ນ ໄວ້ໃນບ້ານ ນັ້ນ, ສຳລັບຕົວ
ລາວເອງ ແລະ ລູກຫລານຂອງລາວຫລັງ
ຈາກລາວ, ຈາກລຸ້ນສູ່ລຸ້ນ.

83 ຖ້າ ຫາກ ລາວ ຈະ ເຮັດ ຕາມ ຄວາມ
ປະສົງຂອງເຮົາ ກໍຢ່າໃຫ້ລາວພາຄອບຄົວ
ຂອງລາວໄປຍັງພື້ນແຜ່ນດິນທາງຕາເວັນ
ອອກ, ແມ່ນແຕ່ໄປຫາເມືອງເຄີດແລນ;
ເຖິງຢ່າງໃດກໍຕາມ, ເຮົາ, ພຣະຜູ້ເປັນເຈົ້າ,
ຈະສ້າງສາເມືອງເຄີດແລນຂຶ້ນ, ແຕ່ເຮົາ,
ພຣະຜູ້ເປັນເຈົ້າ, ໄດ້ຕຽມໄມ້ແສ້ໄວ້ຂ້ຽນຕີ
ຜູ້ອາໄສຢູ່ໃນນັ້ນ.

84 ແລະ ກັບຜູ້ຮັບໃຊ້ຂອງເຮົາ ແອວ
ມອນ ແບບບິດ, ມີຫລາຍເລື່ອງທີ່ເຮົາບໍ່ພໍ
ໃຈ; ຈົ່ງເບິ່ງ, ລາວໄດ້ສະແຫວງຫາທີ່ຈະ
ສະຖາປະນາຄຳແນະນຳຂອງລາວເອງ
ຂຶ້ນແທນຄຳແນະນຳທີ່ເຮົາໄດ້ແຕ່ງຕັ້ງໄວ້,
ແມ່ນແຕ່ຄຳແນະນຳຂອງຝ່າຍປະທານສູງ
ສຸດຂອງສາດສະໜາຈັກຂອງເຮົາ; ແລະ
ລາວໄດ້ຕັ້ງງົວ [ກ]ຄຳຂຶ້ນເພື່ອໃຫ້ຜູ້ຄົນຂອງ
ເຮົານະມັດສະການ.

85 ຢ່າໃຫ້ຄົນໃດ [ກ]ໄປຈາກສະຖານທີ່ນີ້
ຜູ້ທີ່ໄດ້ມາຫາສະຖານທີ່ນີ້ທີ່ພະຍາຍາມຮັກ
ສາບັນຍັດຂອງເຮົາ.

86 ຖ້າ ຫາກພວກເຂົາມີຊີວິດຢູ່ທີ່ນີ້ ກໍ
ໃຫ້ພວກເຂົາມີຊີວິດຢູ່ເພື່ອເຮົາ; ແລະ ຖ້າ
ຫາກພວກເຂົາຕາຍ ກໍໃຫ້ພວກເຂົາຕາຍ
ເພື່ອເຮົາ; ເພາະວ່າພວກເຂົາຈະໄດ້ [ກ]ພັກ
ຜ່ອນຈາກວຽກງານທັງໝົດຂອງພວກ

84*ກ* ອພຍ 32:2–4.
85*ກ* ລກ 9:62.
86*ກ* ພມມ 14:13.
ຄມພ ທີ່ສຸຂະເສີມ;
ພັກຜ່ອນ.

ເຂົາຢູ່ທີ່ນີ້, ແລະ ຈະທຳງານຂອງພວກ
ເຂົາຕໍ່ໄປ.
87 ສະນັ້ນ, ໃຫ້ ຜູ້ ຮັບ ໃຊ້ ຂອງ ເຮົາ
ວິວລຽມ ໄວ້ວາງໃຈໃນເຮົາ, ແລະ ເຊົາ
ຢ້ານກົວກ່ຽວກັບຄອບຄົວຂອງລາວ, ເພາະ
ຄວາມເຈັບປ່ວຍຢູ່ໃນແຜ່ນດິນ. ຖ້າຫາກ
ພວກເຈົ້າ ᵏຮັກເຮົາ, ຈົ່ງຮັກສາບັນຍັດຂອງ
ເຮົາ; ແລະ ຄວາມເຈັບປ່ວຍຢູ່ໃນແຜ່ນດິນ
ຈະ ᵉນຳລັດສະໝີພາບມາສູ່ພວກເຈົ້າ.
88 ໃຫ້ຜູ້ຮັບໃຊ້ຂອງເຮົາ ວິວລຽມ ໄປ
ແລະ ປະກາດພຣະກິດຕິຄຸນອັນເປັນນິດ
ຂອງເຮົາ ດ້ວຍສຽງອັນດັງ, ແລະ ດ້ວຍ
ຄວາມຊື່ນຊົມອັນຍິ່ງໃຫຍ່, ດັ່ງທີ່ ᵏພຣະ
ວິນຍານຂອງເຮົາຈະດົນໃຈລາວ, ແກ່ຜູ້ອາ
ໄສຂອງເມືອງວໍຊໍ, ແລະ ແກ່ຜູ້ອາໄສຂອງ
ເມືອງຄາດເທດນຳອີກ, ແລະ ແກ່ຜູ້ອາໄສ
ຂອງເມືອງເບີລິງຕັນ, ແລະ ແກ່ຜູ້ອາໄສ
ຂອງເມືອງແມອດີເຊິນ, ແລະ ຄອຍຖ້າຄຳ
ແນະນຳເພີ່ມເຕີມດ້ວຍຄວາມອົດທົນ ແລະ
ຢ່າງພາກພຽນຢູ່ກອງປະຊຸມໃຫຍ່ສາມັນ
ຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.
89 ຖ້າຫາກລາວຈະເຮັດຕາມຄວາມ
ປະສົງຂອງເຮົາ ກໍໃຫ້ລາວເຊື່ອຟັງຄຳ
ແນະນຳຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ນັບແຕ່ນີ້ເປັນຕົ້ນໄປ, ແລະ ດ້ວຍກຳລັງ
ແລະ ຄວາມສາມາດຂອງລາວໃຫ້ລາວສະ
ໜັບສະໜູນ ᵏສິດທິຂອງຄົນຍາກຈົນ, ແລະ
ພິມ ᵉຄຳແປໃໝ່ຂອງຄຳອັນສັກສິດຂອງ
ເຮົາໃຫ້ແກ່ຜູ້ອາໄສຂອງແຜ່ນດິນໂລກ.
90 ແລະ ຖ້າຫາກລາວຈະເຮັດການນີ້
ເຮົາຈະ ᵏອວຍພອນລາວດ້ວຍພອນຢ່າງ
ຫລວງຫລາຍ, ເພື່ອວ່າລາວຈະບໍ່ຖືກປະ
ຖິ້ມ, ຫລື ພົບເຫັນລູກຫລານຂອງລາວ
ອອກໄປ ᵉຂໍອາຫານ.
91 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບ
ໃຊ້ຂອງເຮົາ ວິວລຽມ ຖືກກຳນົດ, ແຕ່ງ
ຕັ້ງ, ແລະ ເຈີມ, ໃຫ້ເປັນທີ່ປຶກສາໃຫ້ແກ່
ຜູ້ຮັບໃຊ້ຂອງເຮົາໂຈເຊັບ, ແທນຜູ້ຮັບໃຊ້
ຂອງເຮົາ ໄຮຣຳ, ເພື່ອວ່າຜູ້ຮັບໃຊ້ຂອງເຮົາ
ໄຮຣຳ ຈະໄດ້ຮັບຕຳແໜ່ງຖານະປະໂລຫິດ
ແລະ ᵏປິຕຸ, ຊຶ່ງໄດ້ຖືກກຳນົດໃຫ້ລາວໂດຍ
ພໍ່ຂອງລາວ, ໂດຍພອນ ແລະ ໂດຍສິດນຳ
ອີກ;
92 ເພື່ອວ່ານັບແຕ່ນີ້ເປັນຕົ້ນໄປ ລາວຈະ
ຖືຂໍກະແຈຂອງ ᵏປິຕຸພອນໄວ້ເທິງຫົວຂອງ
ຜູ້ຄົນທັງໝົດຂອງເຮົາ,
93 ເພື່ອວ່າຜູ້ໃດກໍຕາມທີ່ລາວໃຫ້ພອນ
ຈະໄດ້ຮັບພອນ, ແລະ ຜູ້ໃດກໍຕາມທີ່ລາວ
ᵏສາບແຊ່ງຈະຖືກສາບແຊ່ງ; ເພື່ອວ່າສິ່ງ
ໃດກໍຕາມທີ່ລາວຈະ ᵉຜູກມັດເທິງແຜ່ນດິນ
ໂລກ ສິ່ງນັ້ນຈະຖືກຜູກມັດໃນສະຫວັນ;
ແລະ ສິ່ງໃດກໍຕາມທີ່ລາວຈະແກ້ໃຫ້ຫລຸດ
ເທິງແຜ່ນດິນໂລກ ສິ່ງນັ້ນຈະຖືກແກ້ໃຫ້
ຫລຸດໃນສະຫວັນ.
94 ແລະ ຈາກເວລານີ້ເປັນຕົ້ນໄປ ເຮົາ
ຈະກຳນົດກັບລາວວ່າ ລາວຈະເປັນສາດ
ສະດາ, ແລະ ᵏຜູ້ພະຍາກອນ, ແລະ ຜູ້ເປີດ
ເຜີຍແກ່ສາດສະໜາຈັກຂອງເຮົາ, ເຊັ່ນ
ດຽວກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ;

---

87 *ກ* ຢຮ 14:15.
*ຂ* ຄພ 121:8; 122:7.
88 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະວິນຍານບໍລິສຸດ.
89 *ກ* ຄພ 78:3.
*ຂ* ອສ ການແປພຣະຄຣິສຕະທຳຄຳພີຂອງໂຈເຊັບ ສະມິດ.
90 *ກ* ຄມພ ພອນ, ໃຫ້ພອນ, ເປັນພອນ.
*ຂ* ພສສ 37:25.
91 *ກ* ຄພ 107:39–40.
ຄມພ ປິຕຸ, ແຫ່ງປິຕຸ.
92 *ກ* ຄມພ ປິຕຸພອນ.
93 *ກ* ຄພ 132:45–47.
*ຂ* ມທ 16:19.
ຄມພ ຜະນຶກ, ການຜະນຶກ.
94 *ກ* ຄພ 107:91–92.
ຄມພ ຜູ້ພະຍາກອນ.

95 ເພື່ອວ່າລາວຈະໄດ້ກະທຳໃນຄວາມ
ສອດຄ່ອງກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ນຳອີກ; ແລະ ວ່າລາວຈະ ຮັບ ເອົາຄຳ
ແນະນຳຈາກຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ຜູ້
ຈະສະແດງ [ກ]ຂໍກະແຈແກ່ລາວ ຊຶ່ງໂດຍສິ່ງ
ນີ້ ລາວຈະຂໍ ແລະ ໄດ້ຮັບ, ແລະ ຖືກສວມ
ມົງກຸດດ້ວຍພອນ, ແລະ ລັດສະໝີພາບ,
ແລະ ກຽດຕິຍົດ, ແລະ ຖານະປະໂລຫິດ,
ແລະ ຂອງປະທານຂອງຖານະປະໂລຫິດ
ອັນດຽວກັນນັ້ນ, ຊຶ່ງຄັ້ງໜຶ່ງເຄີຍໄດ້ມອບ
ໃຫ້ລາວທີ່ເຄີຍເປັນຜູ້ຮັບໃຊ້ຂອງເຮົາ [ຂ]ອໍລີ
ເວີ ຄາວເດີຣີ;

96 ເພື່ອວ່າຜູ້ຮັບໃຊ້ຂອງເຮົາ ໄຮຣຳ ຈະ
ໄດ້ກ່າວເປັນພະຍານເຖິງສິ່ງທີ່ເຮົາ ຈະ
ສະແດງແກ່ລາວ, ເພື່ອວ່າຊື່ຂອງລາວຈະ
ມີຢູ່ໃນຄວາມຊົງຈຳຢ່າງມີກຽດຈາກລຸ້ນສູ່
ລຸ້ນ, ຕະຫລອດການ ແລະ ຕະຫລອດໄປ.

97 ໃຫ້ຜູ້ຮັບໃຊ້ຂອງເຮົາ ວິວລຽມ ລໍ ໄດ້
ຮັບຂໍກະແຈນຳອີກ ຊຶ່ງໂດຍສິ່ງນີ້ ລາວຈະ
ຂໍ ແລະ ໄດ້ຮັບພອນ; ໃຫ້ລາວ [ກ]ຖ່ອມຕົວ
ຢູ່ຕໍ່ໜ້າເຮົາ, ແລະ ປາດສະຈາກ [ຂ]ອຸບາຍ,
ແລະ ລາວຈະໄດ້ຮັບຈາກພຣະວິນຍານ
ຂອງເຮົາ, ແມ່ນແຕ່ [ຄ]ພຣະຜູ້ປອບໂຍນ,
ຊຶ່ງຈະສະແດງຄວາມຈິງຂອງທຸກເລື່ອງໃຫ້
ປະຈັກແກ່ລາວ, ແລະ ຈະມອບໃຫ້ລາວ,
ໃນຊົ່ວໂມງນັ້ນ, ສິ່ງທີ່ລາວຈະກ່າວ.

98 ແລະ [ກ]ເຄື່ອງໝາຍເຫລົ່ານີ້ຈະຕິດ
ຕາມລາວ—ລາວຈະ [ຂ]ປິ່ນປົວຄົນເຈັບ
ປ່ວຍ, ລາວຈະຂັບໄລ່ຜີຮ້າຍອອກໄປ,
ແລະ ຈະໄດ້ຮັບການປົດປ່ອຍຈາກຄົນທີ່
ຈະວາງຢາພິດຮ້າຍເຖິງຕາຍແກ່ລາວ;

99 ແລະ ລາວຈະຖືກນຳໄປຕາມທາງທີ່
ງູ [ກ]ພິດບໍ່ສາມາດຕອດສົ້ນໜ່ອງຂອງລາວ,
ແລະ ລາວຈະທະຍານຂຶ້ນສູງໃນມະໂນ
ພາບແຫ່ງ [ຂ]ຄວາມນຶກຄິດຂອງລາວເໝືອນ
ຢູ່ເທິງປີກຂອງນົກອິນຊີ.

100 ແລະ ຖ້າຫາກເຮົາຈະໃຫ້ລາວເຮັດ
ໃຫ້ຄົນຕາຍເປັນຄືນມາ, ກໍຢ່າໃຫ້ລາວຢັບ
ຢັ້ງສຽງຂອງລາວໄວ້.

101 ສະນັ້ນ, ໃຫ້ຜູ້ຮັບໃຊ້ຂອງເຮົາ
ວິວລຽມ ເປັ່ງສຽງດັງ ແລະ ຢ່າຢັບຢັ້ງ,
ດ້ວຍຄວາມຊື່ນຊົມ ແລະ ຄວາມປິຕິຍິນດີ,
ແລະ ດ້ວຍໂຮຊັນນາແດ່ພຣະອົງຜູ້ປະທັບ
ຢູ່ເທິງພຣະບັນລັງຕະຫລອດການ ແລະ
ຕະຫລອດໄປ, ພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຈົ້າໄດ້ກ່າວ.

102 ຈົ່ງເບິ່ງ, ເຮົາກ່າວກັບພວກເຈົ້າວ່າ
ເຮົາມີພາລະກິດເກັບໄວ້ໃຫ້ຜູ້ຮັບໃຊ້ຂອງ
ເຮົາ ວິວລຽມ, ແລະ ຜູ້ຮັບໃຊ້ຂອງເຮົາ
ໄຮຣຳ, ແລະ ສຳລັບພວກເຂົາເທົ່ານັ້ນ;
ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ຢູ່ບ້ານ
ຕໍ່ໄປ, ເພາະຕ້ອງການລາວ. ສ່ວນທີ່ເຫລືອ
ຢູ່ເຮົາຈະສະແດງໃຫ້ພວກເຈົ້າຮູ້ໃນພາຍ
ຫລັງ. ແມ່ນເປັນດັ່ງນັ້ນ. ອາແມນ.

103 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກ
ຜູ້ຮັບໃຊ້ຂອງເຮົາ [ກ]ຊິດນີ ຈະຮັບໃຊ້ເຮົາ
ແລະ ເປັນທີ່ປຶກສາໃຫ້ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ, ກໍໃຫ້ລາວລຸກຂຶ້ນ ແລະ ອອກມາ
ຢືນຢູ່ໃນໜ້າທີ່ຂອງການເອີ້ນຂອງລາວ,
ແລະ ຖ່ອມຕົວຢູ່ຕໍ່ໜ້າເຮົາ.

104 ແລະ ຖ້າ ຫາກ ລາວ ຈະ ຖວາຍ

---

95 *ກ* ຄພ 6:28.
*ຂ* ຄມພ ຄາວເດີຣີ, ອໍລີເວີ.
97 *ກ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.
*ຂ* ຄມພ ມານຍາ.
*ຄ* ຄມພ ພຣະຜູ້ປອບໂຍນ.
98 *ກ* ມຣກ 16:17–18. ຄມພ ຂອງປະທານແຫ່ງພຣະວິນຍານ.
*ຂ* ຄມພ ປິ່ນປົວ, ການປິ່ນປົວ.
99 *ກ* ຄພ 84:71–73.
*ຂ* ອພຍ 19:4; ອຊຢ 40:31.
103 *ກ* ຄມພ ຣິກດອນ, ຊິດນີ.

ເຄື່ອງຖວາຍອັນເປັນທີ່ຍອມຮັບແກ່ເຮົາ, ແລະ ການຍອມຮັບ, ແລະ ຍັງຢູ່ກັບຜູ້ຄົນຂອງເຮົາ, ຈົ່ງເບິ່ງ, ເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ, ຈະປິ່ນປົວລາວ ເພື່ອວ່າລາວຈະໄດ້ຫາຍດີ; ແລະ ລາວຈະເປັ່ງສຽງຂອງລາວອີກຢູ່ເທິງພູ, ແລະ ເປັນ ᵃຜູ້ປະກາດແທນຢູ່ຕໍ່ໜ້າເຮົາ.

105 ໃຫ້ລາວມາ ແລະ ຕັ້ງຖິ່ນຖານຄອບຄົວຂອງລາວຢູ່ໃນຄຸ້ມທີ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ອາໄສຢູ່.

106 ແລະ ໃນການເດີນທາງທັງໝົດຂອງລາວ, ໃຫ້ລາວເປັ່ງສຽງຂອງລາວດັ່ງກັບສຽງແກ, ແລະ ເຕືອນ ຜູ້ອາໄສຂອງແຜ່ນດິນໂລກໃຫ້ຫລົບໜີຈາກພຣະພິໂລດທີ່ຈະມາເຖິງ.

107 ໃຫ້ລາວ ຊ່ວຍ ຜູ້ ຮັບ ໃຊ້ ຂອງ ເຮົາ ໂຈເຊັບ, ແລະ ໃຫ້ຜູ້ຮັບໃຊ້ຂອງ ເຮົາ ວິວລຽມ ລໍ ຊ່ວຍຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ນຳອີກ, ໃນການອອກ ᵃການປະກາດທີ່ໜັກແໜ້ນເຖິງບັນດາກະສັດຂອງແຜ່ນດິນໂລກ, ແມ່ນແຕ່ເໝືອນດັ່ງທີ່ເຮົາໄດ້ກ່າວກັບພວກເຈົ້າມາກ່ອນແລ້ວ.

108 ຖ້າຫາກຜູ້ຮັບໃຊ້ຂອງເຮົາ ຊິດນີຈະເຮັດຕາມຄວາມປະສົງຂອງເຮົາ, ກໍຢ່າໃຫ້ລາວພາຄອບຄົວຂອງລາວອອກໄປຫາແຜ່ນດິນທາງ ᵃຕາເວັນອອກ, ແຕ່ໃຫ້ລາວປ່ຽນບ່ອນຢູ່ອາໄສຂອງພວກເຂົາ, ແມ່ນແຕ່ດັ່ງທີ່ເຮົາໄດ້ກ່າວ.

109 ຈົ່ງເບິ່ງ, ມັນບໍ່ແມ່ນຄວາມປະສົງຂອງເຮົາທີ່ລາວຈະສະແຫວງຫາສະຖານທີ່ປອດໄພ ແລະ ທີ່ພັກພາຢູ່ນອກເມືອງທີ່ເຮົາໄດ້ກຳນົດໄວ້ໃຫ້ພວກເຈົ້າ, ແມ່ນແຕ່ເມືອງ ᵃນາວູ.

110 ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າ, ແມ່ນແຕ່ບັດນີ້, ຖ້າຫາກລາວຈະເຊື່ອຟັງສຽງຂອງເຮົາ, ມັນກໍຈະດີກັບລາວ. ແມ່ນເປັນດັ່ງນັ້ນ. ອາແມນ.

111 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງເຮົາ ເອມມັດ ເດວີ ຈ່າຍຄ່າຫຸ້ນໄວ້ໃນມືຂອງຜູ້ທີ່ເຮົາໄດ້ກຳນົດໄວ້ເພື່ອສ້າງບ້ານພັກ, ແມ່ນແຕ່ບ້ານນາວູ.

112 ການນີ້ໃຫ້ລາວເຮັດ ຖ້າຫາກລາວຢາກຈະມີຜົນປະໂຫຍດ; ແລະ ໃຫ້ລາວເຊື່ອຟັງຄຳແນະນຳຂອງຜູ້ຮັບໃຊ້ຂອງເຮົາໂຈເຊັບ, ແລະ ທຳງານດ້ວຍມືຂອງລາວເອງ ເພື່ອວ່າລາວຈະໄດ້ຮັບຄວາມໄວ້ວາງໃຈຈາກມະນຸດ.

113 ແລະ ເມື່ອລາວໄດ້ພິສູດຕົນເອງວ່າຊື່ສັດໃນທຸກສິ່ງທີ່ຈະຝາກຝັງໄວ້ໃນການດູແລຂອງລາວ, ແທ້ຈິງແລ້ວ, ແມ່ນແຕ່ບໍ່ເທົ່າໃດສິ່ງ, ລາວຈະຖືກເຮັດໃຫ້ເປັນ ᵃຜູ້ປົກຄອງຫລາຍສິ່ງ;

114 ສະນັ້ນ ໃຫ້ລາວ ᵃຖ່ອມຕົວ ເພື່ອວ່າລາວຈະຖືກຍົກຂຶ້ນໃຫ້ສູງສົ່ງ. ແມ່ນເປັນດັ່ງນັ້ນ. ອາແມນ.

115 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກຜູ້ຮັບໃຊ້ຂອງເຮົາ ຣໍເບີດ ດີ ຟໍສະເຕີ ຈະເຊື່ອຟັງສຽງຂອງເຮົາ, ໃຫ້ລາວສ້າງບ້ານຫລັງໜຶ່ງໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ຕາມສັນຍາທີ່ລາວໄດ້ເຮັດໄວ້ກັບລາວ, ດັ່ງທີ່ປະຕູຈະເປີດໃຫ້ແກ່ລາວເປັນບາງຄັ້ງ.

104 *ກ* ອພຍ 4:14–16; 2 ນຟ 3:17–18; ຄພ 100:9–11.
107 *ກ* ຄພ 124:2–4.
108 *ກ* ຄພ 124:82–83.
109 *ກ* ຄມພ ເມືອງນາວູ, ລັດອິລີນອຍ (ສະຫະລັດອາເມຣິກາ).
113 *ກ* ມທ 25:14–30.
114 *ກ* ມທ 23:12; ຄພ 101:42.

116 ແລະ ໃຫ້ລາວກັບໃຈຈາກຄວາມໂງ່
ຈ້າທັງໝົດຂອງລາວ, ແລະ ຫຸ້ມຫໍ່ຕົວລາວ
ດ້ວຍ [ກ]ຄວາມໃຈບຸນ; ແລະ ເຊົາເຮັດຄວາມ
ຊົ່ວຮ້າຍ, ແລະ ປະຖິ້ມຄຳເວົ້າຮຸນແຮງທັງ
ໝົດຂອງລາວ;
117 ແລະ ຈ່າຍ ຄ່າ ຫຸ້ນ ຄື ກັນ ໄວ້ ໃນ ມື
ຂອງກຸ່ມຄະນະກຳມະການຂອງບ້ານນາວູ,
ສຳລັບຕົວລາວເອງ ແລະ ສຳລັບລູກຫລານ
ຂອງລາວຫລັງຈາກລາວ, ຈາກລຸ້ນສູ່ລຸ້ນ;
118 ແລະ ເຊື່ອຟັງຄຳແນະນຳຂອງຜູ້ຮັບ
ໃຊ້ຂອງເຮົາ ໂຈເຊັບ, ແລະ ໄຮຣຳ, ແລະ
ວິວລຽມ ລໍ, ແລະ ເຈົ້າໜ້າທີ່ ຊຶ່ງ ເຮົາໄດ້
ເອີ້ນໃຫ້ວາງຮາກຖານຂອງຊີໂອນ; ແລະ
ມັນ ຈະ ດີ ກັບ ລາວ ຕະຫລອດ ການ ແລະ
ຕະຫລອດໄປ. ແມ່ນເປັນດັ່ງນັ້ນ. ອາແມນ.
119 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຢ່າໃຫ້ຄົນ
ໃດຈ່າຍຄ່າຫຸ້ນໃຫ້ກຸ່ມຄະນະກຳມະການ
ຂອງບ້ານນາວູ ຍົກເວັ້ນແຕ່ເຂົາຈະເປັນຜູ້ທີ່
ເຊື່ອໃນພຣະຄຳພີມໍມອນ, ແລະ ການເປີດ
ເຜີຍທີ່ເຮົາໄດ້ມອບໃຫ້ແກ່ພວກເຈົ້າ, ພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ
ໄດ້ກ່າວ;
120 ເພາະ ສິ່ງ ໃດ ທີ່ [ກ]ຫລາຍ ກວ່າ ຫລື
ໜ້ອຍກວ່ານີ້ມາຈາກຄວາມຊົ່ວ, ແລະ ຈະ
ສະຖິດຢູ່ກັບການສາບແຊ່ງ ແລະ ບໍ່ແມ່ນ
ພອນ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຈົ້າໄດ້ກ່າວ. ແມ່ນເປັນດັ່ງນັ້ນ.
ອາແມນ.
121 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ
ຈິງ ແລ້ວ ເຮົາກ່າວກັບ ພວກ ເຈົ້າວ່າ ໃຫ້
ກຸ່ມຄະນະກຳມະການຂອງບ້ານນາວູໄດ້
ຮັບຄ່າຈ້າງຊົດເຊີຍທີ່ທ່ຽງທຳສຳລັບວຽກ
ງານຂອງພວກເຂົາ ຊຶ່ງພວກເຂົາໄດ້ເຮັດ
ໃນການສ້າງບ້ານນາວູ; ແລະ ໃຫ້ຄ່າຈ້າງ
ຂອງພວກເຂົາເປັນໄປດັ່ງທີ່ຈະຕົກລົງກັນ
ໃນບັນດາພວກເຂົາເອງ, ກ່ຽວກັບລາຄາ
ຂອງມັນ.
122 ແລະ ໃຫ້ທຸກຄົນທີ່ຈ່າຍຄ່າຫຸ້ນຮັບ
ຜິດ ຊອບ ສ່ວນທີ່ ເປັນຄ່າ ຈ້າງ ຂອງ ພວກ
ເຂົາ, ຖ້າຫາກ ຈຳ ເປັນ, ເພື່ອການຄ້ຳ ຈູນ
ພວກເຂົາ, ພຣະຜູ້ເປັນເຈົ້າໄດ້ກ່າວ; ຖ້າບໍ່
ດັ່ງນັ້ນ, ວຽກງານຂອງພວກເຂົາຈະຖືເປັນ
ຫຸ້ນໃຫ້ພວກເຂົາໃນບ້ານຫລັງນັ້ນ. ແມ່ນ
ເປັນດັ່ງນັ້ນ. ອາແມນ.
123 ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ບັດນີ້ ເຮົາມອບ [ກ]ເຈົ້າໜ້າທີ່
ຊຶ່ງເປັນຂອງຖານະປະໂລຫິດຂອງເຮົາໃຫ້
ແກ່ພວກເຈົ້າ, ເພື່ອວ່າພວກເຈົ້າຈະຖື [ຂ]ຂໍ
ກະແຈນັ້ນ, ແມ່ນແຕ່ຖານະປະໂລຫິດ ຊຶ່ງ
ເປັນໄປຕາມລະບຽບຂອງ [ຄ]ເມນຄີເສເດັກ,
ຊຶ່ງເປັນໄປຕາມລະບຽບຂອງພຣະບຸດອົງ
ດຽວທີ່ຖືກຳເນີດຂອງເຮົາ.
124 ທຳ ອິດ, ເຮົາມອບ ໄຮຣຳ ສະມິດ
ໃຫ້ແກ່ພວກເຈົ້າເພື່ອເປັນ [ກ]ປິຕຸແກ່ພວກ
ເຈົ້າ, ທີ່ຈະຖືພອນ [ຂ]ການຜະນຶກຂອງສາດ
ສະໜາຈັກຂອງເຮົາ, ແມ່ນແຕ່ພຣະວິນ
ຍານສັກສິດແຫ່ງ [ຄ]ຄຳສັນຍາ, ຊຶ່ງໂດຍ
ການນີ້ພວກເຈົ້າຈະຖືກ [ງ]ຜະນຶກໄວ້ສຳລັບ
ວັນແຫ່ງການໄຖ່, ເພື່ອວ່າພວກເຈົ້າຈະບໍ່
ຕົກເຖິງແມ່ນໃນ [ຈ]ຊົ່ວໂມງແຫ່ງການລໍ້ລວງ
ທີ່ຈະເກີດກັບພວກເຈົ້າ.

116 *ກ* ກລຊ 3:14.
ຄມພ ໃຈບຸນ, ຄວາມໃຈບຸນ.
120 *ກ* ມທ 5:37; ຄພ 98:7.
123 *ກ* ຄມພ ຕຳແໜ່ງ, ເຈົ້າໜ້າທີ່.
*ຂ* ຄມພ ຂໍກະແຈຂອງ
ຖານະປະໂລຫິດ.
*ຄ* ຄມພ ຖານະປະໂລຫິດ
ແຫ່ງເມນຄີເສເດັກ.
124 *ກ* ຄມພ ປິຕຸ, ແຫ່ງປິຕຸ.
*ຂ* ຄມພ ຜະນຶກ, ການຜະນຶກ.
*ຄ* ຄພ 76:53; 88:3–4.
ຄມພ ພຣະວິນຍານສັກ
ສິດແຫ່ງຄຳສັນຍາ.
*ງ* ອຟຊ 4:30.
*ຈ* ພນມ 3:10.

125 ເຮົາມອບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ໃຫ້ແກ່ພວກເຈົ້າ ທີ່ຈະເປັນແອວເດີຄວບ
ຄຸມສາດສະໜາຈັກທັງໝົດຂອງເຮົາ, ເພື່ອ
ເປັນຜູ້ແປ, ຜູ້ເປີດເຜີຍ, [ກ]ຜູ້ພະຍາກອນ,
ແລະ ສາດສະດາ.

126 ເຮົາມອບຜູ້ຮັບໃຊ້ຂອງເຮົາ ຊິດນີ
ຣິກດອນ ແລະ ຜູ້ຮັບໃຊ້ຂອງເຮົາ ວິວລຽມ
ລໍ ໃຫ້ເປັນທີ່ປຶກສາຂອງລາວ, ເພື່ອວ່າຄົນ
ເຫລົ່ານີ້ຈະໄດ້ປະກອບກຸ່ມ ແລະ ຝ່າຍ
ປະທານສູງສຸດ, ເພື່ອຮັບເອົາ [ກ]ການເປີດ
ເຜີຍແທນທັງສາດສະໜາຈັກ.

127 ເຮົາມອບຜູ້ຮັບໃຊ້ຂອງເຮົາ [ກ]ບຣິກຳ
ຢັງ ໃຫ້ພວກເຈົ້າ ເພື່ອເປັນປະທານສະພາ
ອັກຄະສາວົກສິບສອງທີ່ເຄື່ອນທີ່;

128 ຊຶ່ງ [ກ]ອັກຄະສາວົກສິບສອງຖືຂໍ
ກະແຈທີ່ຈະເປີດສິດອຳນາດຂອງອານາ
ຈັກຂອງເຮົາເທິງສີ່ທິດຂອງແຜ່ນດິນໂລກ,
ແລະ ຕໍ່ຈາກນັ້ນ ທີ່ຈະ [ຂ]ສົ່ງຄຳສອນຂອງ
ເຮົາໄປເຖິງມະນຸດສະໂລກທັງໝົດ.

129 ຄົນເຫລົ່ານັ້ນຄື ຣິເບີ ຊີ ຄິມໂບ,
ພາລີ ພີ ພະແຣັດ, ອໍສັນ ພະແຣັດ, ອໍສັນ
ຮາຍດ໌, ວິວລຽມ ສະມິດ, ຈອນ ເທເລີ, ຈອນ
ອີ ເພຈ໌, ວິວເຝີດ ວູດຣັບ, ວິວເລີດ ຣິເຈີສ໌,
ຈອດ ເອ ສະມິດ;

130 ເຮົາໄດ້ [ກ]ຮັບ [ຂ]ເດວິດ ແພດເຕັນ ໄວ້
ກັບຕົວເຮົາເອງ; ຈົ່ງເບິ່ງ, ບໍ່ມີຄົນໃດເອົາ
ຖານະປະໂລຫິດຂອງລາວໄປຈາກລາວ;
ແຕ່, ຕາມຄວາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ ອີກຄົນໜຶ່ງຈະຖືກກຳນົດສູ່
ການເອີ້ນຢ່າງດຽວກັນນີ້.

131 ແລະ ອີກເທື່ອໜຶ່ງ, ເຮົາກ່າວກັບ
ພວກເຈົ້າວ່າ ເຮົາມອບ [ກ]ສະພາສູງໃຫ້
ແກ່ພວກເຈົ້າ, ເພື່ອເປັນຫີນເສົາເອກຂອງ
ຊີໂອນ—

132 ນັ້ນຄື, ແຊມໂຍ ເບັນ, ເຮັນຣີ ຈີ
ເຊີວູດ, ຈອດ ດັບເບິນຢູ ແຮຣິສ, ຊາລີ ຊີ
ຣິຈ໌, ທອມມັສ ໂກຣເວີ, ນິວເອັນ ໄນ້, ເດວິດ
ດອດ, ດັນບາ ວິວສັນ—ຊີມໍ ບຣັນສັນ ເຮົາ
ໄດ້ຮັບໄວ້ກັບຕົວເຮົາ; ບໍ່ມີຄົນໃດເອົາຖາ
ນະປະໂລຫິດຂອງລາວໄປ, ແຕ່ອີກຄົນ
ໜຶ່ງຈະຖືກກຳນົດສູ່ຖານະປະໂລຫິດນີ້
ແທນລາວ; ແລະ ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າວ່າ ໃຫ້ຜູ້ຮັບໃຊ້ຂອງ
ເຮົາ ອາໂຣນ ຈອນສັນ ຖືກແຕ່ງຕັ້ງ ສູ່ການ
ເອີ້ນນີ້ແທນລາວ—ເດວິດ ຟູເມີ, ອາຟີອັສ
ຄັດເລີ, ວິວລຽມ ຮັນຕິງຕັນ.

133 ແລະ ອີກເທື່ອໜຶ່ງ, ເຮົາມອບ ດອນ
ຊີ ສະມິດ ໃຫ້ພວກເຈົ້າເພື່ອເປັນປະທານດູ
ແລກຸ່ມຂອງມະຫາປະໂລຫິດ;

134 ຊຶ່ງເປັນພິທີການໄດ້ຖືກຕັ້ງຂຶ້ນເພື່ອ
ຈຸດປະສົງຂອງການເບິ່ງຄວາມເໝາະ
ສົມຂອງຄົນເຫລົ່ານັ້ນຜູ້ຈະຖືກກຳນົດ
ໃຫ້ເປັນປະທານປະຈຳ ຫລື ເປັນຜູ້ຮັບ
ໃຊ້ດູແລ [ກ]ສະເຕກຕ່າງໆທີ່ກະຈາຍກັນ
ໄປທົ່ວ;

135 ແລະ ພວກເຂົາອາດຈະເດີນທາງ
ນຳອີກກໍໄດ້ຖ້າຫາກພວກເຂົາເລືອກ, ແຕ່
ຈະໄດ້ຮັບແຕ່ງຕັ້ງເປັນປະທານປະຈຳ
ຫລາຍກວ່າ; ນີ້ເປັນໜ້າທີ່ຂອງການເອີ້ນ
ຂອງພວກເຂົາ, ພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຈົ້າໄດ້ກ່າວ.

136 ເຮົາມອບ ອາມາສາ ໄລມັນ ແລະ
ໂນອາ ແພັກກາດ ໃຫ້ແກ່ລາວເພື່ອເປັນທີ່
ປຶກສາ, ເພື່ອວ່າພວກເຂົາຈະຄວບຄຸມກຸ່ມ

125 *ກ* ຄພ 21:1.
ຄມພ ຜູ້ພະຍາກອນ.
126 *ກ* ຄພ 90:4–5.
127 *ກ* ຄມພ ຢັງ, ບຣິກຳ.
128 *ກ* ຄມພ ອັກຄະສາວົກ.
*ຂ* ມຣກ 16:15.
130 *ກ* ຄພ 124:19.
*ຂ* ຄມພ ແພດເຕັນ,
ເດວິດ ດັບເບິນຢູ.
131 *ກ* ຄມພ ສະພາສູງ.
134 *ກ* ຄມພ ສະເຕກ.

ຂອງມະຫາປະໂລຫິດຂອງສາດສະໜາຈັກ
ຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.
137 ແລະ ອີກ ເທື່ອ ໜຶ່ງ, ເຮົາ ກ່າວ ກັບ
ພວກເຈົ້າ ວ່າ, ເຮົາ ມອບ ຈອນ ເອ ຮິກສ໌,
ແຊມໂຍ ວິວລຽມສ໌, ແລະ ເຈຊີ ເບກເກີ, ຊຶ່ງ
ເປັນຖານະປະໂລຫິດທີ່ຄວບຄຸມກຸ່ມຂອງ
[ກ]ແອວເດີ, ຊຶ່ງກຸ່ມໄດ້ຖືກຕັ້ງ ສຳລັບຜູ້ປະຕິ
ບັດສາດສະໜາກິດປະຈຳ; ເຖິງຢ່າງໃດກໍ
ຕາມ ພວກເຂົາອາດຈະເດີນທາງກໍໄດ້, ແຕ່
ພວກເຂົາໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປະຕິບັດ
ສາດສະໜາກິດປະຈຳຢູ່ກັບສາດສະໜາ
ຈັກຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.
138 ແລະ ອີກ ເທື່ອ ໜຶ່ງ, ເຮົາ ມອບ
ໂຈເຊັບ ຢັງ, ໂຈໄຊຢາ ບັດເຕີຟຽວ, ແດນ
ໂຍ ມາຍເອີ, ເຮັນຣີ ເຮີຣີແມນ, ຊີຣາ ໂພ
ຊີເຟີ, ລີວາຍ ແຮນຄ໊ອກ, ເຈມສ໌ ຟໍສະ
ເຕີ, ເພື່ອເປັນປະທານຄວບຄຸມກຸ່ມຂອງ
[ກ]ສາວົກເຈັດສິບ;
139 ຊຶ່ງ ເປັນ ກຸ່ມ ທີ່ ຖືກ ຕັ້ງ ຂຶ້ນ ເພື່ອ ກຸ່ມ
ແອວເດີທີ່ເຄື່ອນທີ່ ເພື່ອເປັນພະຍານເຖິງ
ນາມຂອງເຮົາໃນທົ່ວໂລກ, ບ່ອນໃດກໍຕາມ
ທີ່ສະພາສູງເຄື່ອນທີ່, ອັກຄະສາວົກຂອງ
ເຮົາ, ຈະສົ່ງພວກເຂົາໄປເພື່ອຕຽມທາງໄວ້
ກ່ອນເຮົາ.
140 ຄວາມ ແຕກ ຕ່າງ ລະຫວ່າງ ກຸ່ມ
ໂຄຣຳນີ້ ແລະ ກຸ່ມຂອງແອວເດີຄື ກຸ່ມໜຶ່ງ
ຕ້ອງເດີນທາງຕະຫລອດໄປ, ແລະ ອີກກຸ່ມ
ໜຶ່ງຕ້ອງຄວບຄຸມໜ່ວຍຕ່າງໆຂອງສາດ
ສະໜາຈັກເປັນບາງຄັ້ງ; ກຸ່ມໜຶ່ງມີໜ້າທີ່ຮັບ
ຜິດຊອບ ໃນການເປັນປະທານເປັນບາງ
ຄັ້ງ, ແລະ ອີກກຸ່ມໜຶ່ງບໍ່ມີໜ້າທີ່ຮັບຜິດຊອບ
ໃນການເປັນປະທານ, ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຈົ້າໄດ້ກ່າວ.
141 ແລະ ອີກ ເທື່ອ ໜຶ່ງ, ເຮົາກ່າວກັບ
ພວກເຈົ້າວ່າ ເຮົາມອບ ວິນສັນ ໄນ້, ແຊມໂຍ
ເອັຈ ສະມິດ, ແລະ ຊັດຣາກ ຣາວດີ ໃຫ້ແກ່
ພວກເຈົ້າ, ຖ້າຫາກລາວຈະຮັບເອົາມັນ,
ເພື່ອຄວບຄຸມ [ກ]ຝ່າຍອະທິການ; ຄວາມຮູ້
ເລື່ອງຝ່າຍອະທິການທີ່ກ່າວນີ້ໄດ້ຖືກມອບ
ໃຫ້ແກ່ພວກເຈົ້າຢູ່ໃນໜັງສື [ຂ]ຄຳສອນ ແລະ
ພັນທະສັນຍາ.
142 ແລະ ອີກ ເທື່ອ ໜຶ່ງ, ເຮົາ ກ່າວ ກັບ
ພວກເຈົ້າວ່າ ແຊມໂຍ ໂຣຟ໌ ແລະ ທີ່ປຶກສາ
ຂອງລາວສຳລັບປະໂລຫິດ, ແລະ ປະທານ
ຂອງ ຄູ ສອນ ແລະ ທີ່ ປຶກສາ ຂອງລາວ,
ແລະ ປະທານຂອງມັກຄະນາຍົກ ແລະ ທີ່
ປຶກສາຂອງລາວນຳອີກ, ແລະ ປະທານ
ສະເຕກ ແລະ ທີ່ປຶກສາຂອງລາວນຳອີກ.
143 ຕຳແໜ່ງທີ່ເຮົາໄດ້ມອບໃຫ້ແກ່ພວກ
ເຈົ້າຢູ່ຂ້າງເທິງ, ແລະ ຂໍກະແຈໃນນັ້ນ,
ເພື່ອເປັນການຊ່ວຍເຫລືອ ແລະ ການປົກ
ຄອງ, ເພື່ອວຽກງານຂອງການປະຕິບັດ
ສາດສະໜາກິດ ແລະ ການເຮັດໃຫ້ໄພ່ພົນ
ຂອງເຮົາ [ກ]ດີພ້ອມ.
144 ແລະ ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້
ແກ່ພວກເຈົ້າ, ວ່າພວກເຈົ້າຄວນບັນຈຸຕຳ
ແໜ່ງເຫລົ່ານີ້ທັງໝົດ ແລະ [ກ]ເຫັນຊອບ
ກັບຊື່ເຫລົ່ານີ້ຊຶ່ງເຮົາໄດ້ກ່າວເຖິງ, ຫລື ບໍ່
ດັ່ງນັ້ນ ກໍບໍ່ໃຫ້ເຫັນຊອບກັບຊື່ເຫລົ່ານີ້ຢູ່ທີ່
ກອງປະຊຸມໃຫຍ່ສາມັນຂອງເຮົາ;
145 ແລະ ວ່າພວກ ເຈົ້າຈະຕຽມຫ້ອງ
ສຳ ລັບ ຕຳແໜ່ງ ທັງ ໝົດ ນີ້ ໃນ ບ້ານຂອງ
ເຮົາ ເມື່ອພວກເຈົ້າສ້າງມັນແດ່ນາມຂອງ
ເຮົາ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງພວກເຈົ້າໄດ້ກ່າວ. ແມ່ນເປັນດັ່ງນັ້ນ.
ອາແມນ.

137 ກ ຄພ 107:11–12, 89–90.
ຄນພ ກຸ່ມ; ແອວເດີ.
138 ກ ຄນພ ສາວົກເຈັດສິບ.
141 ກ ຄພ 68:14; 107:15.
ຂ ຄນພ ຄຳສອນ ແລະ ພັນທະສັນຍາ.
143 ກ ອຟຊ 4:11–14.
144 ກ ຄພ 26:2.
ຄນພ ເຫັນຊອບນຳກັນ.

# ພາກທີ 125

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງນາວູ, ລັດອິລີນອຍ, ເດືອນມີນາ 1841, ກ່ຽວກັບໄພ່ພົນຂອງພຣະເຈົ້າໃນເຂດໄອໂອວາ.*

*1–4, ໄພ່ພົນຂອງພຣະເຈົ້າຕ້ອງສ້າງເມືອງຕ່າງໆຂຶ້ນ ແລະ ຕ້ອງມາເຕົ້າໂຮມກັນທີ່ສະເຕກຂອງຊີໂອນ.*

1 ແມ່ນຫຍັງຄືພຣະປະສົງຂອງພຣະຜູ້ເປັນເຈົ້າກ່ຽວກັບໄພ່ພົນຂອງພຣະເຈົ້າໃນເຂດໄອໂອວາ?

2 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກຄົນທີ່ [a]ເອີ້ນຕົນເອງໂດຍນາມຂອງເຮົາ ແລະ ພະຍາຍາມເປັນໄພ່ພົນຂອງເຮົາ, ຖ້າຫາກພວກເຂົາຈະເຮັດຕາມຄວາມປະສົງຂອງເຮົາ ແລະ ຮັກສາບັນຍັດຂອງເຮົາກ່ຽວກັບພວກເຂົາ, ກໍໃຫ້ພວກເຂົາມາເຕົ້າໂຮມກັນຢູ່ສະຖານທີ່ ທີ່ເຮົາຈະກຳນົດໃຫ້ແກ່ພວກເຂົາໂດຍຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ແລະ ສ້າງສາເມືອງຕ່າງໆຂຶ້ນແດ່ນາມຂອງເຮົາ, ເພື່ອວ່າພວກເຂົາຈະຕຽມພ້ອມສຳລັບສິ່ງທີ່ມີໄວ້ໃຫ້ໃນເວລາທີ່ຈະມາເຖິງ.

3 ໃຫ້ພວກເຂົາສ້າງສາເມືອງໜຶ່ງຂຶ້ນແດ່ນາມຂອງເຮົາ ຢູ່ໃນແຜ່ນດິນທີ່ກົງກັນຂ້າມກັບເມືອງນາວູ, ແລະ ໃຫ້ຕັ້ງຊື່ເມືອງນັ້ນວ່າ [a]ເຊຣາເຮັມລາ.

4 ແລະ ໃຫ້ທຸກຄົນທີ່ມາຈາກພາກຕາເວັນອອກ, ແລະ ພາກຕາເວັນຕົກ, ແລະ ພາກເໜືອ, ແລະ ພາກໃຕ້, ທີ່ມີຄວາມປາດຖະໜາຈະພັກພາອາໄສຢູ່ທີ່ນັ້ນ, ມາຮັບເອົາມູນມໍລະດົກຂອງພວກເຂົາໃນເມືອງນັ້ນຄືກັນ, ເຊັ່ນດຽວກັບໃນເມືອງ [a]ແນສະວຽວ, ຫລື ໃນເມືອງນາວູ, ແລະ ໃນ [b]ສະເຕກທັງໝົດຊຶ່ງເຮົາໄດ້ກຳນົດໄວ້, ພຣະຜູ້ເປັນເຈົ້າໄດ້ກ່າວ.

# ພາກທີ 126

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນບ້ານຂອງບຣິກຳ ຢັງ, ທີ່ເມືອງນາວູ, ລັດອິລີນອຍ, ວັນທີ 9 ເດືອນກໍລະກົດ, 1841. ໃນເວລານີ້ ບຣິກຳ ຢັງ ໄດ້ເປັນປະທານຂອງກຸ່ມອັກຄະສາວົກສິບສອງ.*

*1–3, ບຣິກຳ ຢັງ ໄດ້ຖືກຍົກຍ້ອງສຳລັບວຽກງານຂອງເພິ່ນ ແລະ ຖືກປົດຈາກການເດີນທາງໄປທົ່ວໃນອະນາຄົດ.*

1 ອ້າຍ [a]ບຣິກຳ ຢັງ ທີ່ເຄົາລົບ ແລະ ຮັກແພງເປັນຢ່າງຍິ່ງ, ຕາມຄວາມຈິງແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບອ້າຍວ່າ: ຜູ້ຮັບໃຊ້ຂອງເຮົາ ບຣິກຳ, ມັນບໍ່ຖືກຮຽກ

**125** 2 *a* ຄມພ ພຣະເຢຊູຄຣິດ—ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ.
3 *a* ຄມພ ເຊຣາເຮັມລາ.
4 *a* ອສ ເມືອງແນສະວຽວ, ເຂດລີ, ລັດໄອໂອວາ.
*b* ຄມພ ສະເຕກ.
**126** 1 *a* ຄມພ ຢັງ, ບຣິກຳ.

ຮ້ອງ ຈາກ ມື ຂອງ ເຈົ້າ ອີກ ທີ່ ຈະ ໃຫ້ ຈາກ
ຄອບຄົວຂອງເຈົ້າໄປດັ່ງໃນເວລາທີ່ຜ່ານ
ມາ, ເພາະ ເຄື່ອງ ຖວາຍ ຂອງ ເຈົ້າ ເປັນ ທີ່
ຍອມຮັບຕໍ່ເຮົາ.
2 ເຮົາ ໄດ້ ເຫັນ [a]ວຽກ ງານ ແລະ ການ
ເຮັດວຽກໜັກຂອງເຈົ້າໃນການເດີນທາງ
ເພື່ອນາມຂອງເຮົາ.
3 ສະນັ້ນ ເຮົາ ຈຶ່ງ ບັນ ຊາ ເຈົ້າ ໃຫ້ ສົ່ງ
ຄຳຂອງເຮົາອອກໄປທົ່ວ, ແລະ ເອົາໃຈ
ໃສ່ [a]ຄອບ ຄົວຂອງເຈົ້າເປັນພິເສດຈາກ
ເວລາ ນີ້ ໄປ, ນັບ ແຕ່ນີ້ເປັນ ຕົ້ນໄປ ແລະ
ຕະຫລອດການ. ອາແມນ.

# ພາກທີ 127

*ສານຈາກໂຈເຊັບ ສະມິດ ຜູ້ເປັນສາດສະດາເຖິງໄພ່ພົນຍຸກສຸດທ້າຍ ທີ່ເມືອງນາວູ, ລັດອິລິນອຍ, ໂດຍບັນຈຸຄຳແນະນຳເລື່ອງການບັບຕິສະມາແທນຄົນຕາຍ, ລົງວັນທີທີ່ເມືອງນາວູ, ວັນທີ 1 ເດືອນກັນຍາ, 1842.*

*1–4, ໂຈເຊັບ ສະມິດ ຊົມຊື່ນຍິນດີໃນການຂົ່ມເຫັງ ແລະ ຄວາມທຸກຍາກລຳບາກ; 5–12, ຕ້ອງມີການບັນທຶກກ່ຽວກັບການບັບຕິສະມາແທນຄົນຕາຍໄວ້.*

1 ໂດຍທີ່ພຣະຜູ້ເປັນເຈົ້າໄດ້ເປີດເຜີຍ
ແກ່ຂ້າພະເຈົ້າວ່າ ສັດຕູຂອງຂ້າພະເຈົ້າ,
ທັງໃນລັດມີເຊີຣີ ແລະ ລັດນີ້, ໄດ້ໄລ່ຕາມ
ຂ້າພະເຈົ້າອີກ; ແລະ ຕາບໃດທີ່ພວກເຂົາ
ໄລ່ຕາມຂ້າພະເຈົ້າໂດຍບໍ່ມີ [a]ສາເຫດ,
ແລະ ບໍ່ມີແມ່ນແຕ່ເງົາ ຫລື ສີຂອງຄວາມ
ຍຸດຕິທຳ ຫລື ຄວາມຖືກຕ້ອງທາງຝ່າຍ
ພວກເຂົາ ໃນການຍຸຍົງໃຫ້ດຳເນີນຄະດີຕໍ່
ຕ້ານຂ້າພະເຈົ້າ; ແລະ ຕາບໃດທີ່ຂໍ້ກ່າວ
ຫາທັງໝົດຂອງພວກເຂົາມີມູນຖານເປັນ
ຄວາມເທັດ ທີ່ຍ້ອມດ້ວຍສີດຳທີ່ສຸດ, ຂ້າ
ພະເຈົ້າໄດ້ຄິດວ່າເປັນການສົມຄວນ ແລະ
ເປັນຄວາມສະຫລຽວສະຫລາດຂອງຂ້າ
ພະເຈົ້າທີ່ຈະຈາກສະຖານທີ່ແຫ່ງນີ້ໄປຊົ່ວ
ໄລຍະໜຶ່ງ, ເພື່ອຄວາມປອດໄພຂອງຂ້າ
ພະເຈົ້າເອງ ແລະ ຄວາມປອດໄພຂອງຜູ້
ຄົນພວກນີ້. ຂ້າພະເຈົ້າຢາກກ່າວກັບທຸກ
ຄົນ ທີ່ຂ້າພະເຈົ້າໄດ້ເຮັດທຸລະກິດດ້ວຍ,
ວ່າຂ້າພະເຈົ້າໄດ້ຝາກທຸລະຂອງຂ້າພະ
ເຈົ້າໄວ້ກັບຕົວແທນ ແລະ ສະໝຽນ ຜູ້ຈະ
ຈັດການກັບທຸລະກິດທັງໝົດໃນວິທີທີ່ວ່ອງ
ໄວ ແລະ ຖືກຕ້ອງ, ແລະ ຈະເບິ່ງໜີ້ສິນ
ທັງໝົດຂອງຂ້າພະເຈົ້າຖືກຊຳລະໃນເວລາ
ອັນເໝາະສົມ, ໂດຍການຈຳໜ່າຍຊັບສົມ
ບັດອອກໄປ, ຫລື ບໍ່ສະນັ້ນ, ຕາມຄວາມຈຳ
ເປັນຂອງເລື່ອງ, ຫລື ຕາມສະພາບການຈະ
ອຳນວຍ. ເມື່ອໃດຂ້າພະເຈົ້າຮູ້ວ່າພະຍຸໄດ້
ຜ່ານພົ້ນໄປແລ້ວ, ເມື່ອນັ້ນຂ້າພະເຈົ້າຈະ
ກັບມາຫາພວກທ່ານອີກ.
2 ແລະ ກ່ຽວກັບ [a]ໄພອັນຕະລາຍ ຊຶ່ງ
ຂ້າພະເຈົ້າຖືກເອີ້ນໃຫ້ຜ່ານພົ້ນມາ, ເບິ່ງຄື

2 *ກ* ຄມພ ວຽກງານ.
3 *ກ* ຄມພ ຄອບຄົວ.
**127** 1 *ກ* ໂຢບ 2:3; ມທ 5:10–12; 1 ປຕ 2:20–23.
2 *ກ* ພສສ 23. ຄມພ ຂົ່ມເຫັງ, ການຂົ່ມເຫັງ.

ວ່າມັນເປັນເລື່ອງເລັກໜ້ອຍຕໍ່ຂ້າພະເຈົ້າ,
ເພາະ [ຂ]ຄວາມອິດສາ ແລະ ຄວາມໂມໂຫ
ຮ້າຍຂອງມະນຸດເປັນໂຊກຊາຕາປົກກະຕິ
ຂອງຂ້າພະເຈົ້າຕະຫລອດວັນເວລາຂອງຊີ
ວິດຂອງຂ້າພະເຈົ້າ; ແລະ ເພາະດ້ວຍເຫດ
ໃດກໍບໍ່ຮູ້ ມັນເບິ່ງຄືວ່າເປັນສິ່ງລຶກລັບ, ເວັ້ນ
ເສຍແຕ່ຂ້າພະເຈົ້າໄດ້ຖືກ [ຄ]ແຕ່ງຕັ້ງນັບແຕ່
ກ່ອນການວາງຮາກຖານຂອງໂລກເພື່ອ
ຈຸດປະສົງບາງຢ່າງທີ່ດີ, ຫລື ຊົ່ວ, ຕາມທີ່
ພວກທ່ານຈະເລືອກເອີ້ນກັນ. ພວກທ່ານ
ຈົ່ງຕັດສິນເອົາເອງ. ພຣະເຈົ້າຮູ້ຈັກທຸກສິ່ງ
ທັງປວງເຫລົ່ານີ້, ບໍ່ວ່າມັນຈະເປັນເລື່ອງດີ
ຫລື ຊົ່ວ. ແຕ່ເຖິງຢ່າງໃດກໍຕາມ, ນ້ຳເລິກ
ເປັນສິ່ງທີ່ຂ້າພະເຈົ້າເຄີຍລອຍມາແລ້ວຈົນ
ລຶ້ງ. ທຸກສິ່ງທັງປວງກາຍເປັນເລື່ອງທຳມະ
ດາສຳລັບຂ້າພະເຈົ້າ. ແລະ ຂ້າພະເຈົ້າຮູ້
ສຶກເໝືອນໂປໂລ, ທີ່ຈະຊົມຊື່ນຍິນດີໃນ
[ງ]ຄວາມທຸກຍາກລຳບາກ; ເພາະວ່າຈົນເຖິງ
ວັນນີ້ ພຣະເຈົ້າຂອງບັນພະບຸລຸດຂອງຂ້າ
ພະເຈົ້າໄດ້ປົດປ່ອຍຂ້າພະເຈົ້າອອກຈາກ
ທຸກສິ່ງເຫລົ່ານີ້ທັງໝົດ ແລະ ຈະປົດປ່ອຍ
ຂ້າພະເຈົ້ານັບແຕ່ນີ້ເປັນຕົ້ນໄປ; ເພາະຈົ່ງ
ເບິ່ງ, ແລະ ເບິ່ງແມ, ຂ້າພະເຈົ້າຈະມີໄຊ
ຊະນະເໜືອສັດຕູທັງປວງຂອງຂ້າພະເຈົ້າ,
ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວໄວ້ດັ່ງນີ້.
3 ສະນັ້ນ ໃຫ້ໄພ່ພົນຂອງພຣະເຈົ້າປິຕິ
ຍິນດີເຖີດ, ແລະ ດີໃຈຢ່າງຍິ່ງ; ເພາະວ່າ
[ກ]ພຣະເຈົ້າຂອງອິດສະຣາເອນເປັນພຣະ
ເຈົ້າຂອງພວກເຂົາ, ແລະ ພຣະອົງຈະແບ່ງ
ການຊົດເຊີຍທີ່ທ່ຽງທຳໃຫ້ເປັນລາງວັນ
ຢູ່ເທິງຫົວຂອງຜູ້ກົດຂີ່ທັງປວງຂອງພວກ
ເຂົາ.
4 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງແລ້ວ
ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ໃຫ້ວຽກ
ງານຂອງ [ກ]ພຣະວິຫານຂອງເຮົາ, ແລະ
ວຽກງານທັງໝົດທີ່ເຮົາໄດ້ກຳນົດໃຫ້ພວກ
ເຈົ້າດຳເນີນຕໍ່ໄປ ແລະ ບໍ່ໃຫ້ຢຸດ; ແລະ
ໃຫ້ [ຂ]ຄວາມພາກພຽນ, ແລະ ຄວາມບາກ
ບັ່ນ, ແລະ ຄວາມອົດທົນ, ແລະ ວຽກງານ
ຂອງພວກເຈົ້າທະວີຄູນສອງເທົ່າ, ແລະ
ພວກເຈົ້າຈະບໍ່ມີທາງສູນເສຍລາງວັນຂອງ
ພວກເຈົ້າເລີຍ, ຈອມໂຍທາໄດ້ກ່າວ. ແລະ
ຖ້າຫາກພວກເຂົາ [ຄ]ຂົ່ມເຫັງພວກເຈົ້າ,
ສາດສະດາ ແລະ ຄົນທີ່ຊອບທຳທີ່ເຄີຍມີຊີ
ວິດກ່ອນພວກເຈົ້າກໍເຄີຍຖືກມາແລ້ວຄືກັນ.
ສຳລັບທຸກສິ່ງທຸກຢ່າງນີ້ ມັນມີລາງວັນຢູ່ໃນ
ສະຫວັນ.
5 ແລະ ອີກເທື່ອໜຶ່ງ, ຂ້າພະເຈົ້າໃຫ້ຄຳ
ແກ່ພວກທ່ານກ່ຽວກັບ [ກ]ການບັບຕິສະມາ
ແທນຄົນ [ຂ]ຕາຍຂອງພວກທ່ານ.
6 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າ
ໄດ້ກ່າວດັ່ງນີ້ກັບພວກທ່ານກ່ຽວກັບຄົນ
ຕາຍຂອງພວກທ່ານ: ເມື່ອຄົນໃດກໍຕາມ
ໃນບັນດາພວກເຈົ້າຮັບ [ກ]ບັບຕິສະມາແທນ
ຄົນຕາຍຂອງພວກເຈົ້າ, ໃຫ້ມີ [ຂ]ຜູ້ບັນທຶກ,
ແລະ ໃຫ້ເຂົາເປັນພະຍານທີ່ເຫັນກັບຕາ
ເຖິງການຮັບບັບຕິສະມາຂອງພວກເຈົ້າ;
ໃຫ້ເຂົາໄດ້ຍິນກັບຫູຂອງເຂົາ, ເພື່ອວ່າເຂົາ
ຈະເປັນພະຍານເຖິງຄວາມຈິງ, ພຣະຜູ້
ເປັນເຈົ້າໄດ້ກ່າວ;

2 ຂ ຄມພ ອິດສາ.
ຄ ຄມພ ແຕ່ງຕັ້ງລ່ວງໜ້າ, ການແຕ່ງຕັ້ງລ່ວງໜ້າ.
ງ 2 ກຣທ 6:4–5. ຄມພ ຍາກລຳບາກ, ຄວາມຍາກລຳບາກ.
3 ກ 3 ນຟ 11:12–14.
4 ກ ຄພ 124:55.
ຂ ຄມພ ພາກພຽນ, ຄວາມພາກພຽນ.
ຄ ຄມພ ຂົ່ມເຫັງ, ການຂົ່ມເຫັງ.
5 ກ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາແທນຄົນຕາຍ.
ຂ ຄມພ ຄວາມລອດສຳລັບຄົນຕາຍ.
6 ກ 1 ກຣທ 15:29; ຄພ 128:13, 18.
ຂ ຄພ 128:2–4, 7.

7 ເພື່ອວ່າໃນການເຮັດບັນທຶກທັງໝົດ
ຂອງພວກເຈົ້າ ມັນຈະຖືກ [ກ]ບັນທຶກໄວ້ໃນ
ສະຫວັນ; ເພື່ອວ່າສິ່ງໃດກໍຕາມທີ່ພວກ
ເຈົ້າຈະ [ຂ]ຜູກມັດເທິງແຜ່ນດິນໂລກ ສິ່ງນັ້ນ
ຈະຖືກຜູກມັດໃນສະຫວັນ; ແລະ ສິ່ງໃດກໍ
ຕາມທີ່ພວກເຈົ້າຈະແກ້ໃຫ້ຫລຸດເທິງແຜ່ນ
ດິນໂລກ ສິ່ງນັ້ນຈະຖືກແກ້ໃຫ້ຫລຸດໃນ
ສະຫວັນ;
8 ເພາະ ເຮົາກຳລັງຈະ [ກ]ຟື້ນຟູຫລາຍສິ່ງ
ໃຫ້ແຜ່ນດິນໂລກ, ກ່ຽວກັບ [ຂ]ຖານະປະໂລ
ຫິດ, ຈອມໂຍທາໄດ້ກ່າວ.
9 ແລະ ອີກ ເທື່ອໜຶ່ງ, ໃຫ້ [ກ]ບັນທຶກທັງ
ໝົດມີຢູ່ຢ່າງເປັນລະບຽບຮຽບຮ້ອຍ, ເພື່ອ
ວ່າມັນຈະຖືກເກັບມ້ຽນໄວ້ໃນທີ່ເກັບເອກະ
ສານຂອງພຣະວິຫານສັກສິດຂອງເຮົາ,
ເພື່ອວ່າຈະຮັກສາມັນໄວ້ໃນຄວາມຊົງຈຳ
ຈາກລຸ້ນສູ່ລຸ້ນ, ຈອມໂຍທາໄດ້ກ່າວ.
10 ຂ້າພະເຈົ້າຈະກ່າວກັບໄພ່ພົນທັງໝົດ
ວ່າ ຂ້າພະເຈົ້າມີຄວາມປາດຖະໜາ, ດ້ວຍ
ຄວາມປາດຖະໜາອັນແຮງກ້າ, ທີ່ຈະກ່າວ
ກັບພວກເຂົາຈາກແທ່ນປາໄສກ່ຽວກັບ
ເລື່ອງການບັບຕິສະມາແທນຄົນຕາຍ, ໃນ
ວັນຊະບາໂຕໜ້າ. ແຕ່ເນື່ອງຈາກວ່າຂ້າ
ພະເຈົ້າບໍ່ມີອຳນາດທີ່ຈະເຮັດເຊັ່ນນັ້ນ, ຂ້າ
ພະເຈົ້າຈະຂຽນພຣະຄຳຂອງພຣະຜູ້ເປັນ
ເຈົ້າເປັນບາງຄັ້ງ, ກ່ຽວກັບເລື່ອງນີ້, ແລະ
ສົ່ງມັນມາໃຫ້ພວກທ່ານທາງໄປສະນີ, ເຊັ່ນ
ດຽວກັບເລື່ອງອື່ນໆຫລາຍເລື່ອງ.
11 ບັດນີ້ ຂ້າພະເຈົ້າຂໍຢຸດຕິຈົດໝາຍ
ຂອງຂ້າພະເຈົ້າສຳລັບຕອນນີ້, ເພາະບໍ່ມີ
ເວລາອີກ; ເພາະສັດຕູຕື່ນຕົວ, ແລະ ດັ່ງ
ທີ່ພຣະຜູ້ຊ່ອຍໃຫ້ລອດໄດ້ກ່າວໄວ້, [ກ]ເຈົ້າ
ຊາຍຂອງໂລກນີ້ກຳລັງມາ, ແຕ່ມັນບໍ່ມີ
ອຳນາດຕໍ່ຂ້າພະເຈົ້າເລີຍ.
12 ຈົ່ງເບິ່ງ, ຄຳອະທິຖານຂອງຂ້າພະ
ເຈົ້າຕໍ່ພຣະເຈົ້າ ຄືວ່າທ່ານທຸກຄົນຈະລອດ.
ແລະ ຂ້າພະເຈົ້າລົງນາມເປັນຜູ້ຮັບໃຊ້ຂອງ
ພວກທ່ານໃນພຣະຜູ້ເປັນເຈົ້າ, ເປັນສາດ
ສະດາ ແລະ [ກ]ຜູ້ພະຍາກອນຂອງສາດສະ
ໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນ
ຍຸກສຸດທ້າຍ.

ໂຈເຊັບ ສະມິດ.

# ພາກທີ 128

*ສານຈາກໂຈເຊັບ ສະມິດ ຜູ້ເປັນສາດສະດາ ເຖິງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ບັນຈຸຄຳແນະນຳເພີ່ມເຕີມເລື່ອງການບັບຕິສະມາແທນຄົນຕາຍ, ລົງວັນທີທີ່ເມືອງນາວູ, ລັດອີລີນອຍ, ວັນທີ 6 ເດືອນກັນຍາ, 1842.*

*1–5, ຜູ້ເຮັດບັນທຶກຂອງທ້ອງຖິ່ນ ແລະ ຜູ້ບັນທຶກທົ່ວໄປຕ້ອງຮັບຮອງຂໍ້ມູນຂອງການບັບຕິສະມາແທນຄົນຕາຍ; 6–9, ບັນທຶກຂອງເຂົາເຈົ້າຖືກຜູກມັດໄວ້ ແລະ ຖືກບັນທຶກໄວ້ຢູ່ເທິງແຜ່ນດິນໂລກ ແລະ ໃນສະຫວັນ; 10–14, ອ່າງບັບຕິສະມາເປັນ*

7 *ກ* ຄມພ ໜັງສືທະບຽນແຫ່ງຊີວິດ.
*ຂ* ຄມພ ຜະນຶກ, ການຜະນຶກ.
8 *ກ* ຄມພ ການຟື້ນຟູພຣະກິດຕິຄຸນ.
*ຂ* ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
9 *ກ* ຄພ 128:24.
11 *ກ* ຢຮ 14:30; ປຈສ ຢຮ 14:30 (ພາກທ້ອຍທ້າຍ). ຄມພ ມານ.
12 *ກ* ຄພ 124:125. ຄມພ ຜູ້ພະຍາກອນ.

*ສັນຍາລັກເຖິງຫລຸມສົບ; 15–17, ເອລີຢາໄດ້ຟື້ນຟູອຳນາດກ່ຽວກັບການບັບຕິສະມາແທນຄົນຕາຍ; 18–21, ຂໍກະແຈ, ອຳນາດ, ແລະ ສິດອຳນາດທັງໝົດຂອງຍຸກສະໄໝທີ່ຜ່ານມາໄດ້ຖືກຟື້ນຟູຄືນມາໃໝ່; 22–25, ມີການກ່າວປະກາດຂ່າວອັນໜ້າຊື່ນຊົມ ແລະ ເລີດລ້ຳ ສຳລັບຄົນເປັນ ແລະ ຄົນຕາຍ.*

1 ດັ່ງທີ່ຂ້າພະເຈົ້າໄດ້ກ່າວກັບພວກທ່ານໃນຈົດໝາຍຂອງຂ້າພະເຈົ້າກ່ອນຂ້າພະເຈົ້າໄດ້ຈາກບ່ອນຂອງຂ້າພະເຈົ້າໄປ, ວ່າຂ້າພະເຈົ້າຈະຂຽນເຖິງພວກທ່ານເປັນບາງຄັ້ງ ແລະ ຈະໃຫ້ຂໍ້ມູນແກ່ພວກທ່ານກ່ຽວກັບຫລາຍເລື່ອງ, ບັດນີ້ ຂ້າພະເຈົ້າຈະເລີ່ມເລື່ອງ [ກ]ການບັບຕິສະມາແທນຄົນຕາຍອີກ, ເພາະວ່າເລື່ອງນັ້ນວົນວຽນຢູ່ໃນຈິດໃຈຂອງຂ້າພະເຈົ້າ, ແລະ ກະທົບກະເທືອນຄວາມຮູ້ສຶກຂອງຂ້າພະເຈົ້າຫລາຍທີ່ສຸດ, ນັບຕັ້ງແຕ່ຂ້າພະເຈົ້າຖືກສັດຕູໄລ່ຕາມ.

2 ຂ້າພະເຈົ້າໄດ້ຂຽນເຖິງພວກທ່ານໜ້ອຍໜຶ່ງເລື່ອງການເປີດເຜີຍກ່ຽວກັບຜູ້ບັນທຶກ. ຂ້າພະເຈົ້າມີຄວາມຄິດເພີ່ມເຕີມກ່ຽວກັບເລື່ອງນີ້, ຊຶ່ງບັດນີ້ຂ້າພະເຈົ້າຂໍຢືນຢັນ. ນັ້ນຄື, ມີກ່າວຢູ່ໃນຈົດໝາຍສະບັບກ່ອນຂອງຂ້າພະເຈົ້າວ່າຕ້ອງມີ [ຂ]ຜູ້ບັນທຶກ, ຜູ້ທີ່ຈະເປັນພະຍານດ້ວຍຕາ, ແລະ ໄດ້ຍິນດ້ວຍຫູຂອງລາວນຳອີກ, ເພື່ອວ່າລາວຈະໄດ້ເຮັດບັນທຶກຢ່າງແທ້ຈິງຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

3 ບັດນີ້, ກ່ຽວກັບເລື່ອງນີ້, ອາດຫຍຸ້ງຍາກຫລາຍສຳລັບຜູ້ບັນທຶກຄົນດຽວທີ່ຈະຢູ່ຕະຫລອດເວລາ, ແລະ ເຮັດພາລະກິດທັງໝົດ. ເພື່ອຫລີກເວັ້ນຈາກຄວາມຫຍຸ້ງຍາກນີ້, ຈຶ່ງສາມາດກຳນົດຜູ້ບັນທຶກໃນແຕ່ລະຫ້ອງຖິ່ນຂອງເມືອງ, ຜູ້ມີຄວາມສາມາດທີ່ຈະເຮັດການລາຍງານໃຫ້ຖືກຕ້ອງ; ແລະໃຫ້ລາຍລະອຽດ ແລະ ຊັດແຈ້ງໃນການຈົດການດຳເນີນງານທັງໝົດໄວ້, ໂດຍການຢືນຢັນໃນບັນທຶກຂອງລາວວ່າລາວໄດ້ເຫັນກັບຕາ, ແລະ ໄດ້ຍິນກັບຫູຂອງລາວ, ໂດຍລົງວັນທີ, ແລະ ຊື່, ແລະ ອື່ນໆ, ແລະປະຫວັດຂອງການດຳເນີນງານທຸກຢ່າງ; ໂດຍລົງຊື່ຄົນທີ່ຢູ່ດ້ວຍຈັກສາມຄົນ, ຖ້າຫາກມີໃຜຢູ່ທີ່ນັ້ນ, ຜູ້ຊຶ່ງໃນເວລາໃດກໍຕາມເມື່ອຖືກຂໍຮ້ອງຈະຢືນຢັນການດຳເນີນງານດຽວກັນນັ້ນໄດ້, ເພື່ອວ່າດ້ວຍປາກຂອງ [ຄ]ພະຍານສອງ ຫລື ສາມຄົນ ທຸກໆຄຳຈະຖືກສະຖາປະນາໄວ້.

4 ຈາກນັ້ນ, ໃຫ້ມີຜູ້ບັນທຶກທົ່ວໄປຄົນໜຶ່ງ, ຜູ້ທີ່ຈະຮັບເອົາບັນທຶກອື່ນໆ, ໂດຍການມີໃບຮັບຮອງພ້ອມດ້ວຍລາຍເຊັນຂອງພວກເຂົາເອງ, ຊຶ່ງຢືນຢັນວ່າບັນທຶກທີ່ພວກເຂົາໄດ້ເຮັດເປັນຄວາມຈິງ. ຈາກນັ້ນ ຜູ້ບັນທຶກທົ່ວໄປຂອງສາດສະໜາຈັກຈຶ່ງຈະລົງບັນທຶກໃນປຶ້ມບັນທຶກທົ່ວໄປຂອງສາດສະໜາຈັກ, ພ້ອມດ້ວຍໃບຮັບຮອງ ແລະ ພະຍານທັງໝົດທີ່ຢູ່ດ້ວຍ, ພ້ອມດ້ວຍຂໍ້ຄວາມຂອງລາວເອງວ່າຕາມຄວາມຈິງແລ້ວ ລາວເຊື່ອເອກະສານດັ່ງກ່າວ ແລະ ບັນທຶກວ່າເປັນຄວາມຈິງ, ຈາກຄວາມຮູ້ຂອງລາວເຖິງລັກສະນະທົ່ວໄປ ແລະ ໜ້າທີ່ຂອງຄົນເຫລົ່ານັ້ນໂດຍສາດສະໜາຈັກ. ແລະ ເມື່ອສິ່ງນີ້ໄດ້ຖືກບັນທຶກໄວ້ຢູ່ໃນປຶ້ມບັນທຶກທົ່ວໄປຂອງສາດສະໜາຈັກແລ້ວ, ບັນທຶກຈະສັກສິດເຊັ່ນດຽວກັນ, ແລະ ຈະຢືນຢັນພິທີການເຊັ່ນດຽວກັນ ຄືກັບວ່າລາວໄດ້ເຫັນກັບຕາ, ແລະ

**128** 1*ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາແທນຄົນຕາຍ.
2*ກ* ຄພ 127:6.
3*ກ* ຄມພ ພະຍານ.

ໄດ້ຍິນກັບຫູຂອງລາວ, ແລະ ໄດ້ເຮັດບັນ
ທຶກຢ່າງດຽວກັນໃນປຶ້ມບັນທຶກທົ່ວໄປຂອງ
ສາດສະໜາຈັກ.
5 ພວກທ່ານອາດຄິດວ່າ ລະບຽບຂອງ
ເລື່ອງເຫລົ່ານີ້ລະອຽດຫລາຍ; ແຕ່ຂ້າພະ
ເຈົ້າຂໍບອກພວກທ່ານວ່າ ມັນເປັນພຽງເພື່ອ
ຕອບສະໜອງພຣະປະສົງຂອງພຣະເຈົ້າ,
ໂດຍການເຮັດໃຫ້ສອດຄ່ອງກັບພິທີການ
ແລະ ການຕຽມທີ່ພຣະຜູ້ເປັນເຈົ້າໄດ້ແຕ່ງ
ຕັ້ງ ແລະ ໄດ້ຕຽມໄວ້ກ່ອນການວາງຮາກ
ຖານຂອງໂລກ, ເພື່ອ [ກ]ຄວາມລອດຂອງ
ຄົນຕາຍ ຜູ້ໄດ້ຕາຍປາດສະຈາກ [ຂ]ຄວາມ
ຮູ້ເລື່ອງພຣະກິດຕິຄຸນ.
6 ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າຢາກ
ໃຫ້ພວກທ່ານຈຳໄວ້ວ່າ ໂຢຮັນຜູ້ເປີດເຜີຍ
ໄດ້ໄຕ່ຕອງເລື່ອງນີ້ ກ່ຽວກັບຄົນຕາຍ, ເມື່ອ
ເພິ່ນໄດ້ປະກາດ, ດັ່ງທີ່ພວກທ່ານຈະພົບ
ເຫັນວ່າມີບັນທຶກຢູ່ໃນພຣະນິມິດ 20:12—
*ແລະ ຂ້າພະເຈົ້າໄດ້ເຫັນບັນດາຄົນທີ່ຕາຍ
ແລ້ວທັງຜູ້ນ້ອຍ ແລະ ຜູ້ໃຫຍ່ພາກັນຢືນຢູ່ຕໍ່
ພຣະພັກຂອງພຣະເຈົ້າ; ແລະ ໜັງສືຕ່າງໆ
ກໍເປີດອອກ; ແລະ ມີໜັງສືອີກເຫລັ້ມໜຶ່ງກໍ
ເປີດອອກ, ຄືທະບຽນແຫ່ງຊີວິດ; ແລະ ຄົນ
ທັງຫລາຍທີ່ຕາຍແລ້ວກໍຖືກຕັດສິນຕາມ
ວຽກງານຂອງພວກເຂົາ ດັ່ງທີ່ມີບັນທຶກໄວ້
ໃນໜັງສືເຫລົ່ານັ້ນ.*
7 ພວກທ່ານຈະພົບໃນຄຳກ່າວອ້າງນີ້ວ່າ
ໜັງສືຕ່າງໆກໍເປີດອອກ; ແລະ ມີໜັງສືອີກ
ເຫລັ້ມໜຶ່ງກໍຖືກເປີດອອກ, ຊຶ່ງເປັນ [ກ]ທະ
ບຽນແຫ່ງຊີວິດ; ແຕ່ຄົນທັງຫລາຍທີ່ຕາຍ
ແລ້ວກໍຖືກຕັດສິນຕາມວຽກງານຂອງພວກ
ເຂົາດັ່ງທີ່ມີບັນທຶກໄວ້ໃນໜັງສືເຫລົ່ານັ້ນ;
ດ້ວຍເຫດນັ້ນ, ໜັງສືທີ່ກ່າວເຖິງນັ້ນ ຈະ
ຕ້ອງເປັນໜັງສືທີ່ມີບັນທຶກວຽກງານຂອງ
ພວກເຂົາ, ແລະ ກ່າວເຖິງ [ຂ]ບັນທຶກທີ່ຂຽນ
ຢູ່ເທິງແຜ່ນດິນໂລກ. ແລະ ໜັງສືຊຶ່ງເປັນ
ທະບຽນແຫ່ງຊີວິດຄືງເປັນໜັງສືທີ່ຂຽນຢູ່
ໃນສະຫວັນ; ຫລັກທຳແມ່ນສອດຄ່ອງຢ່າງ
ທ່ຽງຕົງກັບຄຳສອນ ຊຶ່ງໄດ້ບັນຊາພວກ
ທ່ານໃນການເປີດເຜີຍທີ່ມີຢູ່ໃນຈົດໝາຍທີ່
ຂ້າພະເຈົ້າໄດ້ຂຽນເຖິງພວກທ່ານກ່ອນຂ້າ
ພະເຈົ້າຈະໄປຈາກບ່ອນຂອງຂ້າພະເຈົ້າ—
ເພື່ອວ່າໃນການບັນທຶກທັງໝົດຂອງພວກ
ທ່ານ ມັນຈະຖືກບັນທຶກໄວ້ຢູ່ໃນສະຫວັນ.
8 ບັດນີ້, ລັກສະນະຂອງພິທີການນີ້ແມ່ນ
ປະກອບຢູ່ໃນ [ກ]ອຳນາດຂອງຖານະປະໂລ
ຫິດ, ໂດຍການເປີດເຜີຍຂອງພຣະເຢຊູ
ຄຣິດ, ຊຶ່ງໃນນັ້ນ ມັນໄດ້ຖືກປະທານໃຫ້
ວ່າ ສິ່ງໃດກໍຕາມທີ່ພວກທ່ານຈະ [ຂ]ຜູກມັດ
ເທິງແຜ່ນດິນໂລກ ສິ່ງນັ້ນຈະຖືກຜູກມັດໃນ
ສະຫວັນ; ແລະ ສິ່ງໃດກໍຕາມທີ່ພວກທ່ານ
ຈະແກ້ໃຫ້ຫລຸດເທິງແຜ່ນດິນໂລກ ສິ່ງນັ້ນ
ຈະຖືກແກ້ໃຫ້ຫລຸດໃນສະຫວັນ; ຫລື, ອີກ
ຄຳໜຶ່ງ, ຄວາມໝາຍອີກຢ່າງໜຶ່ງຂອງຄຳ
ແປ, ສິ່ງໃດກໍຕາມທີ່ພວກທ່ານບັນທຶກຢູ່
ເທິງແຜ່ນດິນໂລກ ຈະຖືກບັນທຶກໄວ້ໃນ
ສະຫວັນ, ແລະ ສິ່ງໃດກໍຕາມທີ່ພວກທ່ານ
ບໍ່ບັນທຶກຢູ່ເທິງແຜ່ນດິນໂລກ ຈະບໍ່ຖືກບັນ
ທຶກໄວ້ໃນສະຫວັນ; ເພາະຈາກໜັງສືທັງ
ຫລາຍ ຄົນຕາຍຂອງພວກທ່ານຈະໄດ້ຮັບ
ການພິພາກສາ, ຕາມວຽກງານຂອງພວກ
ເຂົາເອງ, ບໍ່ວ່າພວກເຂົາເອງໄດ້ປະຕິບັດ
[ຄ]ພິທີການຂອງພວກເຂົາເອງ, ຫລື ໂດຍອາ
ໄສຕົວແທນຂອງພວກເຂົາເອງ, ຕາມພິທີ

5 ກ ຄມພ ຄວາມລອດ ສຳລັບຄົນຕາຍ.
ຂ 1 ປຕ 4:6.
7 ກ ພນມ 20:12; ຄພ 127:6–7. ຄມພ ໜັງສືທະບຽນແຫ່ງຊີວິດ.
ຂ ຄພ 21:1.
8 ກ ຄມພ ຖານະປະໂລຫິດ; ອຳນາດ.
ຂ ຄມພ ຜະນຶກ, ການຜະນຶກ.
ຄ ຄມພ ພິທີການ.

ການຊຶ່ງພຣະເຈົ້າໄດ້ຕຽມໄວ້ເພື່ອ [ງ]ຄວາມ
ລອດຂອງພວກເຂົານັບແຕ່ກ່ອນການວາງ
ຮາກຖານຂອງໂລກ, ຕາມບັນທຶກຊຶ່ງພວກ
ເຂົາໄດ້ຂຽນໄວ້ກ່ຽວກັບຄົນຕາຍຂອງພວກ
ເຂົາ.
9 ກັບບາງຄົນ ອາດເບິ່ງຄືວ່າ ມັນເປັນຄຳ
ສອນທີ່ອາດຫານຫລາຍທີ່ພວກເຮົາກ່າວ
ເຖິງ—ເປັນອຳນາດຊຶ່ງບັນທຶກໄວ້ ຫລື ຜູກ
ມັດໄວ້ຢູ່ເທິງແຜ່ນດິນໂລກ ແລະ ຜູກມັດ
ໄວ້ຢູ່ໃນສະຫວັນ. ເຖິງຢ່າງໃດກໍຕາມ, ໃນ
ທຸກຍຸກທຸກສະໄໝຂອງໂລກ, ເມື່ອໃດກໍ
ຕາມທີ່ພຣະຜູ້ເປັນເຈົ້າໄດ້ມອບ [ກ]ຍຸກສະ
ໄໝຂອງຖານະປະໂລຫິດໃຫ້ມະນຸດຄົນ
ໃດໂດຍການເປີດເຜີຍໂດຍກົງ, ຫລື ຄົນ
ກຸ່ມໃດກໍຕາມ, ອຳນາດນີ້ກໍໄດ້ຖືກມອບໃຫ້
ສະເໝີ. ດ້ວຍເຫດນີ້, ອັນໃດກໍຕາມທີ່ຄົນ
ເຫລົ່ານັ້ນເຮັດໄປໃນ [ຂ]ສິດອຳນາດ, ໃນ
ພຣະນາມຂອງພຣະຜູ້ເປັນເຈົ້າ, ແລະ ເຮັດ
ຢ່າງຖືກຕ້ອງ ແລະ ຢ່າງຊື່ສັດ, ແລະ ຂຽນ
ບັນທຶກໃນສິ່ງດຽວກັນໄວ້ຢ່າງຖືກຕ້ອງ
ແລະ ຊື່ສັດ, ແລ້ວມັນຈະກາຍເປັນກົດຢູ່
ເທິງແຜ່ນດິນໂລກ ແລະ ໃນສະຫວັນ, ແລະ
ລົບລ້າງບໍ່ໄດ້, ຕາມຄຳສັ່ງຂອງ [ຄ]ພຣະເຢ
ໂຮວາຜູ້ຍິ່ງໃຫຍ່. ຄຳນີ້ເປັນຄວາມຈິງ. ຜູ້
ໃດຈະໄດ້ຍິນມັນໄດ້?
10 ແລະ ອີກເທື່ອໜຶ່ງ, ຍົກຕົວຢ່າງ,
ມັດທາຍ 16:18, 19: *ແລະ ຝ່າຍເຮົາຈຶ່ງ
ບອກວ່າເຈົ້າຄືເປໂຕ ເທິງຫີນກ້ອນນີ້ເຮົາ
ຈະສ້າງສາດສະໜາຈັກຂອງເຮົາຂຶ້ນ;
ແລະ ປະຕູນະລົກຈະເອົາຊະນະມັນບໍ່ໄດ້.
ແລະ ເຮົາຈະມອບຂໍກະແຈຂອງອານາຈັກ
ສະຫວັນໃຫ້ເຈົ້າ: ແລະ ສິ່ງໃດກໍຕາມທີ່
ພວກເຈົ້າຜູກມັດໄວ້ເທິງແຜ່ນດິນໂລກນີ້,
ສິ່ງນັ້ນຈະຖືກຜູກມັດໄວ້ໃນສະຫວັນ; ແລະ
ສິ່ງໃດກໍຕາມທີ່ພວກເຈົ້າຈະແກ້ເທິງແຜ່ນ
ດິນໂລກນີ້, ສິ່ງນັ້ນຈະຖືກແກ້ໃຫ້ຫລຸດແລ້ວ
ໃນສະຫວັນ.*
11 ບັດນີ້ ຄວາມລັບອັນສຳຄັນ ແລະ ສູງ
ສຸດຂອງທັງເລື່ອງ, ແລະ ຊຳມຳໂບນຳ
*(ຄວາມວິເສດສຸດ)* ຂອງທັງເລື່ອງທີ່ວາງຢູ່
ຕໍ່ໜ້າພວກເຮົາ, ຢູ່ໃນການໄດ້ຮັບອຳນາດ
ຂອງຖານະປະໂລຫິດສັກສິດ. ສຳລັບຄົນ
ທີ່ [ກ]ຂໍກະແຈເຫລົ່ານີ້ໄດ້ຖືກມອບໃຫ້ ຈະບໍ່
ມີຄວາມຫຍຸ້ງຍາກໃນການໄດ້ຮັບຄວາມຮູ້
ເລື່ອງຄວາມຈິງແທ້ກ່ຽວກັບ [ຂ]ຄວາມລອດ
ຂອງລູກຫລານມະນຸດ, ທັງສຳລັບຄົນຕາຍ
ແລະ ສຳລັບຄົນເປັນ.
12 ໃນນີ້ຄື [ກ]ລັດສະໝີພາບ ແລະ [ຂ]ກຽດ
ຕິຍົດ, ແລະ ຄວາມເປັນ [ຄ]ອະມະຕະ ແລະ
ຊີວິດນິລັນດອນ—ພິທີການບັບຕິສະມາ
ໂດຍນ້ຳ, ທີ່ຈະ [ງ]ລົງໄປໃນນ້ຳໝົດທັງຕົວ
ຊຶ່ງເປັນລັກສະນະຄ້າຍຄືກັບການຕາຍ,
ເພື່ອວ່າຫລັກທຳຂໍ້ໜຶ່ງຈະກົງກັນກັບຫລັກ
ທຳອີກຂໍ້ໜຶ່ງ; ທີ່ຈະລົງໄປໃນນ້ຳໝົດທັງຕົວ
ແລະ ຂຶ້ນມາຈາກນ້ຳ ເປັນລັກສະນະຄ້າຍ
ຄືກັບການຟື້ນຄືນຊີວິດຂອງຄົນຕາຍໃນ
ການຂຶ້ນມາຈາກຫລຸມສົບຂອງພວກເຂົາ;
ດ້ວຍເຫດນີ້, ພິທີການນີ້ຈຶ່ງຖືກແຕ່ງຕັ້ງໄວ້
ເພື່ອໃຫ້ມີຄວາມສຳພັນກັບພິທີການບັບຕິ
ສະມາແທນຄົນຕາຍ, ໂດຍເປັນໄປໃນລັກ
ສະນະທີ່ຄ້າຍຄືກັບການຕາຍ.
13 ດັ່ງນັ້ນ, ອ່າງ [ກ]ບັບຕິສະມາຈຶ່ງຖືກຕັ້ງ

8 *ງ* ຄມພ ຄວາມລອດ ສຳລັບຄົນຕາຍ.
9 *ກ* ຄມພ ຍຸກສະໄໝ.
*ຂ* ຄມພ ສິດອຳນາດ.
*ຄ* ຄມພ ເຢໂຮວາ.
11 *ກ* ຄມພ ຂໍກະແຈຂອງ ຖານະປະໂລຫິດ.
*ຂ* ຄມພ ລອດ, ຄວາມລອດ.
12 *ກ* ຄມພ ລັດສະໝີພາບ.
*ຂ* ຄມພ ໃຫ້ກຽດ.
*ຄ* ຄມພ ອະມະຕະ, ຄວາມ ເປັນອະມະຕະ.
*ງ* ຄມພ ບັບຕິສະມາ, ໃຫ້ ບັບຕິສະມາ—ບັບຕິ ສະມາໂດຍການລົງໄປ ໃນນ້ຳໝົດທັງຕົວ.
13 *ກ* ຄພ 124:29.

ໄວ້ເປັນ [ຂ]ສັນຍາລັກໃຫ້ຫລຸມຝັງສົບ, ແລະ
ຖືກບັນຊາໃຫ້ຢູ່ໃນສະຖານທີ່ບ່ອນທີ່ຄົນ
ເປັນມັກມາຊຸມນຸມກັນ, ເພື່ອສະແດງໃຫ້
ເຫັນຄົນເປັນ ແລະ ຄົນຕາຍ, ເພື່ອວ່າທຸກ
ສິ່ງທັງປວງຈະມີບາງສິ່ງທີ່ຄ້າຍຄື, ແລະ
ເພື່ອວ່າມັນຈະສອດຄ່ອງກັນແລະກັນ—ວ່າ
ສິ່ງຊຶ່ງເປັນຝ່າຍຂອງໂລກສອດຄ່ອງກັບສິ່ງ
ຊຶ່ງເປັນຝ່າຍສະຫວັນ, ດັ່ງທີ່ໂປໂລໄດ້ປະ
ກາດໃນ, 1 ໂກຣິນໂທ 15:46, 47, ແລະ 48:
14 *ແຕ່ກາຍທີ່ເກີດມາກ່ອນນັ້ນ ບໍ່ແມ່ນ
ເປັນກາຍຝ່າຍວິນຍານ, ແຕ່ເປັນກາຍທຳ
ມະດາ; ແລະ ຕໍ່ມາຈຶ່ງເກີດມີຝ່າຍວິນຍານ.
ມະນຸດຜູ້ທຳອິດເກີດມາຈາກດິນຈຶ່ງກາຍ
ເປັນຂີ້ຝຸ່ນດິນ; ມະນຸດຜູ້ທີສອງຄື ພຣະຜູ້
ເປັນເຈົ້າ ມາຈາກສະຫວັນ. ຜູ້ທີ່ເກີດມາ
ຈາກດິນເປັນຢ່າງໃດ, ຄົນທັງຫລາຍທີ່ເກີດ
ມາຈາກດິນກໍເປັນຢ່າງນັ້ນ; ແລະ ຜູ້ທີ່ສະ
ເດັດມາຈາກສະຫວັນເປັນຢ່າງໃດ, ຄົນທັງ
ຫລາຍທີ່ເປັນຝ່າຍສະຫວັນກໍເປັນຢ່າງນັ້ນ.*
ແລະ ບັນທຶກຢູ່ເທິງໂລກກ່ຽວກັບຄົນຕາຍ
ຂອງພວກທ່ານ, ຊຶ່ງໄດ້ບັນທຶກໄວ້ແທ້ໆສັນ
ໃດ, ກໍຈະຖືກບັນທຶກໄວ້ຢູ່ໃນສະຫວັນສັນ
ນັ້ນ. ສະນັ້ນ, ນີ້ເປັນອຳນາດ [ກ]ການຜະນຶກ
ແລະ ການຜູກມັດ, ແລະ, ໃນຄວາມໝາຍ
ໜຶ່ງຂອງເລື່ອງນີ້, ເປັນ [ຂ]ຂໍກະແຈຂອງອາ
ນາຈັກ, ຊຶ່ງປະກອບດ້ວຍຂໍກະແຈແຫ່ງ
[ຄ]ຄວາມຮູ້.
15 ແລະ ບັດນີ້, ອ້າຍເອື້ອຍນ້ອງທີ່ຮັກ
ແພງຂອງຂ້າພະເຈົ້າ, ຂໍໃຫ້ຂ້າພະເຈົ້າຢືນ
ຢັນກັບພວກທ່ານວ່າ ນີ້ເປັນຫລັກທຳກ່ຽວ
ກັບຄົນຕາຍ ແລະ ຄົນເປັນ ຊຶ່ງຕ້ອງເຮັດ
ແບບເອົາຈິງເອົາຈັງ, ກ່ຽວກັບຄວາມລອດ
ຂອງເຮົາ. ເພາະວ່າຄວາມລອດຂອງພວກ
ເຂົາຈຳເປັນ ແລະ ສຳຄັນຕໍ່ [ກ]ຄວາມລອດ
ຂອງເຮົາ, ດັ່ງທີ່ໂປໂລໄດ້ກ່າວກ່ຽວກັບບັນ
ພະບຸລຸດ—ຖ້າຫາກປາດສະຈາກພວກ
ເຮົາ, ພວກເຂົາຈະ [ຂ]ດີພ້ອມບໍ່ໄດ້—ທັງ
ພວກເຮົາກໍຄືກັນ ຈະດີພ້ອມບໍ່ໄດ້ ຖ້າຫາກ
ປາດສະຈາກຄົນຕາຍຂອງພວກເຮົາ.
16 ແລະ ບັດນີ້, ກ່ຽວກັບການບັບຕິ
ສະມາແທນຄົນຕາຍ, ຂ້າພະເຈົ້າຈະໃຫ້ຂໍ້
ອ້າງອີງຂອງໂປໂລອີກຕອນໜຶ່ງ, 1 ໂກຣິນ
ໂທ 15:29: *ຖ້າບໍ່ເປັນຢ່າງນັ້ນຄົນທັງ
ຫລາຍທີ່ຮັບບັບຕິສະມາແທນຄົນຕາຍນັ້ນ
ຈະໝາຍຄວາມວ່າຢ່າງໃດ ຖ້າພຣະເຈົ້າບໍ່
ບັນດານໃຫ້ຄົນຕາຍຄືນຂຶ້ນມາແທ້? ດ້ວຍ
ເຫດໃດຈຶ່ງມີຄົນຮັບບັບຕິສະມາແທນຄົນ
ຕາຍ?*
17 ແລະ ອີກເທື່ອໜຶ່ງ, ກ່ຽວກັບຂໍ້ອ້າງ
ອີງນີ້ ຂ້າພະເຈົ້າຈະໃຫ້ຂໍ້ອ້າງອີງຈາກສາດ
ສະດາຄົນໜຶ່ງແກ່ພວກທ່ານ, ຊຶ່ງສາຍຕາ
ຂອງເພິ່ນຈົດຈໍ່ຢູ່ທີ່ [ກ]ການຟື້ນຟູຂອງຖານະ
ປະໂລຫິດ, ລັດສະໝີພາບທີ່ຈະຖືກເປີດ
ເຜີຍໃນຍຸກສຸດທ້າຍ, ແລະ ໃນວິທີການພິ
ເສດ ເລື່ອງອັນເລີດລ້ຳທີ່ສຸດນີ້ໃນບັນດາ
ເລື່ອງທັງໝົດທີ່ເປັນຂອງພຣະກິດຕິຄຸນ
ອັນເປັນນິດ, ນັ້ນຄື, ການບັບຕິສະມາແທນ
ຄົນຕາຍ; ເພາະວ່າມາລາກີໄດ້ກ່າວ, ໃນ
ບົດສຸດທ້າຍ, ຂໍ້ 5 ແລະ 6: *ແຕ່ກ່ອນມື້ຍິ່ງ
ໃຫຍ່ ແລະ ໜ້າຢ້ານກົວຂອງພຣະຜູ້ເປັນ
ເຈົ້າຈະມາເຖິງ, ເຮົາຈະໃຊ້ [ຂ]ເອລີຢາຜູ້ປະ
ກາດພຣະຄຳຂອງເຮົາມາ. ລາວຈະຫັນໃຈ*

13 *ຂ* ຄມພ ສັນຍາລັກ.
14 *ກ* ຄມພ ຜະນຶກ, ການຜະນຶກ.
*ຂ* ຄມພ ຂໍກະແຈຂອງ ຖານະປະໂລຫິດ.
*ຄ* ປຈສ ລກ 11:53 (ພາກຫ້ອຍທ້າຍ).
15 *ກ* ຄມພ ຄວາມລອດ ສຳລັບຄົນຕາຍ.
*ຂ* ຮຣ 11:40. ຄມພ ດີພ້ອມທຸກຢ່າງ.
17 *ກ* ຄມພ ການຟື້ນຟູ ພຣະກິດຕິຄຸນ.
*ຂ* 3 ນຟ 25:5–6; ຄພ 2; 110:13–16. ຄມພ ເອລີຢາ.

*ພໍ່ມາຫາລູກ, ແລະ ຫັນໃຈລູກໄປຫາພໍ່. ບໍ່*
*ດັ່ງນັ້ນ ເຮົາຈະມາ ແລະ ທຳລາຍແຜ່ນດິນ*
*ໂລກດ້ວຍຄຳສາບແຊ່ງ.*
18 ຂ້າ ພະ ເຈົ້າ ອາດ ຈະ ໃຫ້ ຄຳ ແປ ທີ່
[ກ]ແຈ່ມ ແຈ້ງຫລາຍ ກວ່ານີ້ກ່ຽວກັບ ເລື່ອງ
ນີ້, ແຕ່ສິ່ງທີ່ໃຫ້ໄວ້ກໍພຽງພໍແລ້ວສຳລັບຈຸດ
ປະສົງຂອງຂ້າພະເຈົ້າ. ມັນພຽງພໍທີ່ຈະຮູ້,
ໃນກໍລະນີນີ້, ວ່າແຜ່ນດິນໂລກຈະຖືກທຳ
ລາຍດ້ວຍຄຳສາບແຊ່ງ ຍົກເວັ້ນແຕ່ຈະມີ
[ຂ]ບ້ວງບາງຊະນິດ ຫລື ບາງປະເພດ ເພື່ອ
ເຊື່ອມບັນພະບຸລຸດໃສ່ກັບລູກຫລານ, ໄວ້
ໃນບາງເລື່ອງ ຫລື ບາງຢ່າງ—ແລະ ຈົ່ງ
ເບິ່ງ ເລື່ອງນັ້ນຄືເລື່ອງໃດ? ມັນຄື [ຄ]ການ
ບັບຕິສະມາແທນຄົນຕາຍ. ເພາະວ່າຖ້າ
ຫາກປາດສະຈາກພວກເຂົາ, ພວກເຮົາຈະ
ດີພ້ອມບໍ່ໄດ້; ທັງພວກເຂົາກໍຄືກັນ ຈະດີ
ພ້ອມບໍ່ໄດ້ ຖ້າຫາກປາດສະຈາກພວກເຮົາ.
ທັງພວກເຂົາ ຫລື ພວກເຮົາ ຈະດີພ້ອມບໍ່
ໄດ້ຄືກັນ ຖ້າຫາກປາດສະຈາກຄົນທີ່ໄດ້
ຕາຍໃນພຣະກິດຕິຄຸນ; ເພາະມັນຈຳເປັນ
ໃນການເລີ່ມຕົ້ນ [ງ]ຍຸກສະໄໝຂອງຄວາມ
ສົມບູນແຫ່ງເວລາ, ຊຶ່ງບັດນີ້ ຍຸກສະໄໝດັ່ງ
ກ່າວເລີ່ມຕົ້ນແລ້ວ, ວ່າການມາຮ່ວມກັນທີ່
ເປັນໜຶ່ງ ແລະ ສົມບູນ ແລະ ດີພ້ອມ, ແລະ
ການເຊື່ອມເຂົ້າກັນຂອງຍຸກສະໄໝຕ່າງໆ,
ແລະ ຂໍກະແຈ, ແລະ ອຳນາດ, ແລະ ລັດ
ສະໝີພາບຈະເກີດຂຶ້ນ, ແລະ ຖືກເປີດເຜີຍ
ນັບຕັ້ງແຕ່ວັນເວລາຂອງອາດາມ ແມ່ນແຕ່
ຈົນເຖິງເວລາປະຈຸບັນ. ແລະ ບໍ່ພຽງເທົ່າ
ນີ້, ແຕ່ສິ່ງທີ່ບໍ່ເຄີຍຖືກເປີດເຜີຍນັບຕັ້ງແຕ່
ການວາງ [ຈ]ຮາກຖານຂອງໂລກ, ແຕ່ໄດ້ຖືກ
ເກັບຊ້ອນໄວ້ໃຫ້ພົ້ນຈາກຄົນມີປັນຍາ ແລະ
ຄົນຮອບຄອບ, ຈະຖືກເປີດເຜີຍແກ່ [ສ]ເດັກ
ນ້ອຍ ແລະ ເດັກແດງທາລົກໃນຍຸກນີ້, ໃນ
ຍຸກສະໄໝຂອງຄວາມສົມບູນແຫ່ງເວລາ.
19 ບັດນີ້, ພວກເຮົາໄດ້ຍິນຫຍັງໃນພຣະ
ກິດຕິຄຸນທີ່ເຮົາໄດ້ຮັບ? ສຽງແຫ່ງຄວາມຍິນ
ດີ! ສຽງແຫ່ງຄວາມເມດຕາຈາກສະຫວັນ;
ແລະ ສຽງແຫ່ງ [ກ]ຄວາມຈິງອອກຈາກແຜ່ນ
ດິນໂລກ; ຂ່າວອັນໜ້າຊື່ນຊົມສຳລັບຄົນ
ຕາຍ; ສຽງແຫ່ງຄວາມຍິນດີສຳລັບຄົນເປັນ
ແລະ ຄົນຕາຍ; [ຂ]ຂ່າວອັນໜ້າຊື່ນຊົມແຫ່ງ
ຄວາມປີຕິຍິນດີອັນຍິ່ງໃຫຍ່. [ຄ]ຕີນຂອງຜູ້
ທີ່ຢູ່ເທິງພູນັ້ນງາມພຽງໃດ ຜູ້ທີ່ໄດ້ນຳເອົາ
ຂ່າວອັນໜ້າຊື່ນຊົມມາ, ທີ່ກ່າວກັບຊີໂອນ
ວ່າ: ຈົ່ງເບິ່ງ, ພຣະເຈົ້າຂອງເຈົ້າຊົງປົກ
ຄອງ! ດັ່ງ [ງ]ນ້ຳຄ້າງແຫ່ງກາເມນສັນໃດ,
ຄວາມຮູ້ຂອງພຣະເຈົ້າຈະລົງມາ ເທິງພວກ
ເຂົາສັນນັ້ນ!
20 ແລະ ອີກເທື່ອໜຶ່ງ, ພວກເຮົາໄດ້ຍິນ
ຫຍັງ? ຂ່າວ ອັນໜ້າຊື່ນຊົມຈາກ [ກ]ຄູ ໂມ
ຣາ! [ຂ]ໂມ ໂຣ ໄນ, ທູດ ຈາກ ສະຫວັນ, ຜູ້
ປະກາດຄວາມສຳເລັດຂອງຖ້ອຍຄຳຂອງ
ສາດສະດາ—[ຄ]ໜັງສືທີ່ຈະຖືກເປີດເຜີຍ.
ສຸລະສຽງຂອງພຣະຜູ້ເປັນເຈົ້າໃນຖິ່ນແຫ້ງ
ແລ້ງກັນດານຂອງເມືອງ [ງ]ເຟແອດ, ເຂດ

---

18 *ກ* ຈສ—ປ 1:36–39.
*ຂ* ຄນພ ພິທີການ—ພິທີການກະທຳແທນ; ລຳດັບການສືບເຊື້ອສາຍ.
*ຄ* ຄພ 124:28–30; 127:6–7.
*ງ* ຄນພ ຍຸກສະໄໝ.
*ຈ* ຄພ 35:18.
*ສ* ມທ 11:25; ລກ 10:21; ແອວ 32:23.
19 *ກ* ພສສ 85:10–11.
*ຂ* ລກ 2:10.
*ຄ* ອຊຢ 52:7–10; ມຊຢ 15:13–18; 3 ນຟ 20:40.
*ງ* ພບຍ 32:2; ຄພ 121:45.
20 *ກ* ຈສ—ປ 1:51–52. ຄນພ ຄູໂມຣາ, ພູ.
*ຂ* ຄນພ ໂມໂຣໄນ, ລູກຊາຍຂອງມໍມອນ.
*ຄ* ອຊຢ 29:4, 11–14; 2 ນຟ 27:6–29. ຄນພ ພຣະຄຳພີມໍມອນ.
*ງ* ຄນພ ເມືອງເຟແອດ, ລັດນິວຢອກ (ສະຫະລັດອາເມຣິກາ).

ເຊ ເນ ກາ, [ຈ]ປະ ກາດ ພະຍານ ສາມ ຄົນ ທີ່
ຈະກ່າວຄຳພະຍານເຖິງໜັງສື! ສຽງຂອງ
[ສ]ມີຄາເອນຢູ່ແຄມຝັ່ງຊັສຄູຮັນນາ, ສັງເກດ
ເຫັນມານ ເມື່ອມັນໄດ້ປະກົດເປັນທູດແຫ່ງ
[ຊ]ຄວາມສະຫວ່າງ! ສຽງຂອງ [ຍ]ເປໂຕ, ຢາ
ໂກໂບ, ແລະ ໂຢຮັນ ໃນຖິ່ນແຫ້ງແລ້ງກັນ
ດານລະຫວ່າງເມືອງຮາມໂມນີ ເຂດຊັສຄູ
ຮັນນາ, ແລະ ໂຄນສະວຽວ, ເຂດບຣູມ, ທີ່
ແມ່ນ້ຳຊັສຄູຮັນນາ, ຜູ້ປະກາດຕົນວ່າໄດ້
ຄອບຄອງ [ດ]ຂໍກະແຈຂອງອານາຈັກ, ແລະ
ຂອງຍຸກສະໄໝຂອງຄວາມສົມບູນແຫ່ງ
ເວລາ!
21 ແລະ ອີກ ເທື່ອ ໜຶ່ງ, ສຸ ລະ ສຽງ ຂອງ
ພຣະ ເຈົ້າໃນຫ້ອງຂອງ [ກ]ພໍ່ ຕູ້ວິດເມີ, ໃນ
ເມືອງ ເຟແອດ, ເຂດເຊເນກາ, ແລະ ໃນ
ເວລາ ຕ່າງໆ, ແລະ ໃນສະຖານ ທີ່ ຕ່າງໆ
ຕະຫລອດການເດີນທາງ ແລະ ຄວາມທຸກ
ຍາກລຳບາກ ຂອງສາດສະໜາ ຈັກ ຂອງ
ພຣະ ເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ!
ແລະ ສຽງຂອງມີຄາເອນ, ຫົວໜ້າທູດ; ສຽງ
ຂອງ [ຂ]ຄັບຣິເອນ, ແລະ ຂອງ [ຄ]ຣາຟາເອນ,
ແລະ ຂອງ [ງ]ທູດຕ່າງໆ, ຈາກມີຄາເອນ ຫລື
[ຈ]ອາດາມ ລົງໄປ ເຖິງເວລາປະຈຸບັນ, ທຸກ
ຄົນປະກາດ [ສ]ຍຸກສະໄໝຂອງພວກເຂົາ,
ສິດຂອງພວກເຂົາ, ຂໍກະແຈຂອງພວກ
ເຂົາ, ກຽດຕິຍົດຂອງພວກເຂົາ, ເດຊານຸ
ພາບ ແລະ ລັດສະໝີພາບຂອງພວກເຂົາ,
ແລະ ອຳນາດຂອງຖານະປະໂລຫິດຂອງ
ພວກເຂົາ; ໂດຍໃຫ້ເປັນບັນທັດ, ເປັນ [ຊ]ຂໍ້
ເລັກໆ ໜ້ອຍໆ; ນີ້ໜ້ອຍໜຶ່ງ, ແລະ ນັ້ນ
ໜ້ອຍໜຶ່ງ; ໃຫ້ການປອບໂຍນແກ່ພວກ
ເຮົາໂດຍການປ່າວປະກາດເຖິງສິ່ງທີ່ຈະ
ມາເຖິງ, ໂດຍການຢືນຢັນ [ຍ]ຄວາມຫວັງ
ຂອງພວກເຮົາ!
22 ອ້າຍ ເອື້ອຍ ນ້ອງ ທັງ ຫລາຍ, ພວກ
ເຮົາຈະບໍ່ກ້າວຕໍ່ໄປໃນອຸດົມການອັນຍິ່ງ
ໃຫຍ່ເຊັ່ນນີ້ບໍ? ກ້າວໄປໜ້າ ແລະ ບໍ່ຖອຍ
ກັບ. ຈົ່ງກ້າຫານ, ພີ່ນ້ອງທັງຫລາຍ; ແລະ
ກ້າວຕໍ່ໄປ, ຕໍ່ໄປເຖິງໄຊຊະນະ! ໃຫ້ໃຈຂອງ
ພວກທ່ານປິຕິຍິນດີເຖີດ, ແລະ ດີໃຈຢ່າງ
ຍິ່ງ. ໃຫ້ແຜ່ນດິນໂລກເປັ່ງສຽງ [ກ]ຮ້ອງເພງ
ເຖີດ. ໃຫ້ຄົນຕາຍເປັ່ງສຽງຮ້ອງສັນລະເສີນ
ນິລັນດອນຖວາຍກະສັດ [ຂ]ເອມານູເອນ, ຜູ້
ໄດ້ແຕ່ງຕັ້ງ, ກ່ອນໂລກມີມາ, ຊຶ່ງຈະເຮັດ
ໃຫ້ພວກເຮົາສາມາດ [ຄ]ໄຖ່ພວກເຂົາອອກ
ຈາກທີ່ [ງ]ຄຸມຂັງຂອງພວກເຂົາ; ເພາະນັກ
ໂທດຈະອອກໄປເປັນອິດສະລະ.
23 ໃຫ້ [ກ]ພູ ເຂົາ ຮ້ອງ ດ້ວຍ ຄວາມ ຊື່ນ
ຊົມ, ແລະ ເຈົ້າຮ່ອມພູທັງປວງປ່າວຮ້ອງ
ໃຫ້ ດັງ; ແລະ ເຈົ້າ ທ້ອງ ທະເລ ແລະ
ແຜ່ນ ດິນ ແຫ້ງ ທັງ ປວງ ຈົ່ງ ບອກເຖິງສິ່ງ
ມະຫັດ ສະ ຈັນ ຂອງ ກະສັດ ນິ ລັນ ດອນ
ຂອງເຈົ້າ! ແລະ ເຈົ້າແມ່ນ້ຳ, ຫ້ວຍຮ່ອງ,
ແລະ ຄອງນ້ຳທັງປວງ, ຈົ່ງໄຫລລົງດ້ວຍ
ຄວາມຍິນດີ. ໃຫ້ປ່າດົງ ແລະ ພົງໄພທັງ
ປວງຢູ່ໃນທົ່ງຈົ່ງສັນລະເສີນພຣະຜູ້ເປັນ
ເຈົ້າ; ແລະ ເຈົ້າ [ຂ]ຫີນສີລາທັງຫລາຍຈົ່ງ
ຮ້ອງໃຫ້ດ້ວຍຄວາມຊື່ນຊົມ! ແລະ ໃຫ້

---

20 *ຈ* ຄພ 17:1–3.
*ສ* ຄພ 27:11.
ຄມພ ອາດາມ.
*ຊ* 2 ກຣທ 11:14.
*ຍ* ຄພ 27:12.
*ດ* ຄມພ ຂໍກະແຈຂອງ ຖານະປະໂລຫິດ.
21 *ກ* ອສ ພິເຕີ ວິດເມີ ຜູ້ພໍ່.
*ຂ* ຄມພ ຄັບຣິເອນ.
*ຄ* ຄມພ ຣາຟາເອນ.
*ງ* ຄມພ ທູດ, ເທວະດາ.
*ຈ* ຄພ 107:53–56.
*ສ* ຄມພ ຍຸກສະໄໝ.
*ຊ* ອຊຢ 28:10.
*ຍ* ຄມພ ຫວັງ, ຄວາມຫວັງ.
22 *ກ* ອຊຢ 49:13.
*ຂ* ອຊຢ 7:14;
ແອວ 5:50.
ຄມພ ເອມານູເອນ.
*ຄ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ງ* ອຊຢ 24:22;
ຄພ 76:72–74.
23 *ກ* ອຊຢ 44:23.
*ຂ* ລກ 19:40.

ດວງ ຕາເວັນ, ດວງເດືອນ, ແລະ ດວງ
[ຄ]ຮຸ່ງອາລຸນຮ່ວມກັນຮ້ອງເພງ, ແລະ ໃຫ້
ບຸດ ທັງ ປວງ ຂອງພຣະເຈົ້າຮ້ອງດ້ວຍ
ຄວາມຊື່ນຊົມ! ແລະ ໃຫ້ການສ້າງນິລັນ
ດອນປະກາດພຣະນາມຂອງພຣະອົງ
ຕະຫລອດໄປ ແລະ ຕະຫລອດການ! ແລະ
ອີກເທື່ອໜຶ່ງ ເຮົາກ່າວວ່າ ສຽງທີ່ເຮົາໄດ້ຍິນ
ຈາກສະຫວັນຊ່າງປະເສີດພຽງໃດນໍ, ທີ່ປະ
ກາດລັດສະໝີພາບ, ແລະ ຄວາມລອດ,
ແລະ ກຽດຕິຍົດ, ແລະ ຄວາມເປັນ [ງ]ອະມະ
ຕະ, ແລະ [ຈ]ຊີວິດນິລັນດອນ; ອານາຈັກ,
ເຂດປົກຄອງ, ແລະ ອຳນາດ ເຂົ້າຫູຂອງ
ພວກເຮົາ!
24 ຈົ່ງເບິ່ງ, [ກ]ວັນອັນຍິ່ງໃຫຍ່ຂອງພຣະ
ຜູ້ເປັນເຈົ້າໃກ້ເຂົ້າມາເຖິງແລ້ວ; ແລະ ໃຜ
ຈະຍັງ [ຂ]ທົນຢູ່ໄດ້ໃນວັນແຫ່ງການສະເດັດ
ມາຂອງພຣະອົງ, ແລະ ໃຜຈະຢືນຢູ່ໄດ້
ເມື່ອພຣະອົງມາປະກົດ? ເພາະວ່າພຣະ
ອົງເປັນເໝືອນດັ່ງໄຟທີ່ [ຄ]ຫລອມໂລຫະ,
ແລະ ເປັນເໝືອນດັ່ງສະບູທີ່ມີພະລັງແຮງ
ຂອງຄົນຊັກຜ້າ; ແລະ ພຣະອົງຈະປະທັບ
ນັ່ງຢູ່ດັ່ງຜູ້ [ງ]ຫລອມເງິນໃຫ້ບໍລິສຸດ, ແລະ
ພຣະອົງຈະຊຳລະພວກລູກຊາຍຂອງ [ຈ]ເລ
ວີ, ແລະ ເຮັດໃຫ້ພວກເຂົາບໍລິສຸດ, ດັ່ງດຽວ
ກັນກັບຄຳ ແລະ ເງິນ, ເພື່ອວ່າພວກເຂົາຈະ
ນຳ [ສ]ເຄື່ອງຖວາຍບູຊາມາຖວາຍແດ່ພຣະ
ຜູ້ເປັນເຈົ້າໃນຄວາມຊອບທຳ. ສະນັ້ນ ໃຫ້
ພວກເຮົາ, ໃນຖານະສາດສະໜາຈັກໜຶ່ງ
ແລະ ຜູ້ຄົນກຸ່ມໜຶ່ງ, ແລະ ໃນຖານະໄພ່ພົນ
ຍຸກສຸດທ້າຍ, ຖວາຍເຄື່ອງບູຊາແດ່ພຣະ
ຜູ້ເປັນເຈົ້າໃນຄວາມຊອບທຳ; ແລະ ໃຫ້
ພວກເຮົາຖວາຍໜັງສືເຫລັ້ມໜຶ່ງ ທີ່ມີ [ຊ]ບັນ
ທຶກຂອງຄົນຕາຍຂອງພວກເຮົາ ໃນພຣະ
ວິຫານທີ່ສັກສິດຂອງພຣະອົງ ເມື່ອມັນສຳ
ເລັດ, ຊຶ່ງຈະສົມຄວນກັບການຍອມຮັບທັງ
ປວງ.
25 ອ້າຍ ນ້ອງ ທັງ ຫລາຍ, ຂ້າພະເຈົ້າມີ
ຫລາຍສິ່ງທີ່ຈະກ່າວກັບພວກທ່ານກ່ຽວກັບ
ເລື່ອງນີ້; ແຕ່ບັດນີ້ຈະຢຸດຕິພຽງເທົ່ານີ້ສຳ
ລັບເວລານີ້, ແລະ ຈະກ່າວກ່ຽວກັບເລື່ອງນີ້
ອີກໃນເວລາອື່ນ. ຂ້າພະເຈົ້າເປັນຜູ້ຮັບໃຊ້
ທີ່ຕ່ຳຕ້ອຍຂອງພວກທ່ານຕະຫລອດໄປ,
ແລະ ເປັນເພື່ອນຜູ້ບໍ່ເຄີຍປ່ຽນແປງ,

ໂຈເຊັບ ສະມິດ.

# ພາກທີ 129

*ຄຳແນະນຳທີ່ມອບໃຫ້ໂດຍໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງນາວູ, ລັດອິລິນອຍ, ວັນທີ 9 ເດືອນກຸມພາ, 1843, ໂດຍເຮັດໃຫ້ຮູ້ເຖິງຂໍກະແຈທີ່ສຳຄັນສາມປະການ ຊຶ່ງບອກໃຫ້ຮູ້ເຖິງລັກສະນະທີ່ຖືກຕ້ອງຂອງເຫລົ່າທູດ ແລະ ວິນຍານຂອງຜູ້ປະຕິບັດສາດສະໜາກິດ.*

23 ຄ ໂຢບ 38:7.
ງ ຄມພ ອະມະຕະ, ຄວາມເປັນອະມະຕະ.
ຈ ຄມພ ຊີວິດນິລັນດອນ.
24 ກ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
ຂ ມລກ 3:1–3.
ຄ 3 ນຟ 24:2–3.
ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
ງ ຊກຢ 13:9.
ຈ ພບຍ 10:8; ຄພ 13; 124:39.
ສ ຄພ 84:31.
ຄມພ ເຄື່ອງຖວາຍ.
ຊ ຄພ 127:9.
ຄມພ ລຳດັບການສືບເຊື້ອສາຍ.

*1–3, ມີທັງຮ່າງກາຍທີ່ຟື້ນຄືນຊີວິດ ແລະ ຮ່າງກາຍທີ່ເປັນວິນຍານໃນສະຫວັນ; 4–9, ຂໍກະແຈໄດ້ຖືກມອບໃຫ້ເພື່ອວ່າຜູ້ສົ່ງຂ່າວຈາກອີກເບື້ອງໜຶ່ງຂອງມ່ານຈະຖືກແຈ້ງໃຫ້ຮູ້ວ່າເປັນຜູ້ໃດ.*

1 ມີ ຮ່າງ ກາຍ ສອງ ປະ ເພດ ຢູ່ ໃນ
[ກ]ສະຫວັນ, ນັ້ນຄື: [ຂ]ເຫລົ່າທູດ, ຜູ້ໄດ້ [ຄ]ຟື້ນ
ຄືນຊີວິດແລ້ວ, ໂດຍມີຮ່າງກາຍທີ່ເປັນເນື້ອ
ໜັງ ແລະ ກະດູກ—
2 ຍົກ ຕົວ ຢ່າງ, ພຣະ ເຢຊູ ໄດ້ ກ່າວ ວ່າ:
*ຈົ່ງຄຳເບິ່ງຕົວເຮົາ ແລະ ພວກເຈົ້າກໍຈະຮູ້,
ເພາະວ່າຜີບໍ່ມີ [ກ]ເນື້ອໜັງ, ບໍ່ມີກະດູກດັ່ງທີ່
ພວກເຈົ້າເຫັນເຮົາມີຢູ່ນີ້.*
3 ປະ ເພດ ທີ ສອງ: [ກ]ວິນ ຍານ ຂອງ ຄົນ
[ຂ]ທ່ຽງທຳທີ່ຖືກເຮັດໃຫ້ດີພ້ອມ, ເຂົາເຈົ້າ
ເປັນຜູ້ທີ່ບໍ່ໄດ້ຟື້ນຄືນຊີວິດເທື່ອ, ແຕ່ໄດ້ຮັບ
ລັດສະໝີພາບອັນດຽວກັນນັ້ນເປັນມູນມໍ
ລະດົກ.
4 ເມື່ອຜູ້ສົ່ງຂ່າວມາບອກວ່າ ເຂົາມີຂ່າວ
ສານ ຈາກ ພຣະ ເຈົ້າ, ຈົ່ງຍື່ນມືຂອງທ່ານ
ອອກໄປ ແລະ ຂໍໃຫ້ເຂົາຈັບມືກັບທ່ານ.
5 ຖ້າຫາກເຂົາເປັນທູດ ເຂົາຈະເຮັດເຊັ່ນ
ນັ້ນ, ແລະ ທ່ານຈະສຳພັດມືຂອງເຂົາ.
6 ຖ້າຫາກເຂົາເປັນວິນຍານຂອງຄົນທ່ຽງ
ທຳທີ່ຖືກເຮັດໃຫ້ດີພ້ອມ ເຂົາຈະມາໃນລັດ
ສະໝີພາບຂອງເຂົາ; ເພາະມັນເປັນທາງ
ດຽວເທົ່ານັ້ນທີ່ເຂົາສາມາດມາປະກົດ—
7 ຈົ່ງຂໍໃຫ້ເຂົາຈັບມືກັບທ່ານ, ແຕ່ເຂົາຈະ
ບໍ່ເຄື່ອນໄຫວ, ເພາະມັນເປັນການກົງກັນ
ຂ້າມກັບລະບຽບຂອງສະຫວັນທີ່ຄົນທ່ຽງ
ທຳຈະຫລອກລວງ; ແຕ່ເຂົາຍັງຈະບອກ
ຂ່າວສານຂອງເຂົາ.
8 ຖ້າຫາກເປັນ [ກ]ມານທີ່ມາດັ່ງທູດແຫ່ງ
ຄວາມສະຫວ່າງ, ເມື່ອທ່ານຂໍຈັບມືກັບມັນ,
ມັນຈະຍື່ນມືມາຈັບມືທ່ານ, ແລະ ທ່ານຈະ
ບໍ່ສຳພັດຫຍັງ; ສະນັ້ນທ່ານຈຶ່ງສັງເກດເຫັນ
ມັນ.
9 ນີ້ຄືຂໍກະແຈທີ່ສຳຄັນສາມປະການ ຊຶ່ງ
ໂດຍຂໍກະແຈເຫລົ່ານີ້ ທ່ານຈະຮູ້ໄດ້ວ່າ
ການປະຕິບັດໃດມາຈາກພຣະເຈົ້າ.

# ພາກທີ 130

*ຄຳແນະນຳຕ່າງໆທີ່ມອບໃຫ້ໂດຍໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງຣາມັສ, ລັດອິລິນອຍ, ວັນທີ 2 ເດືອນເມສາ, 1843.*

*1–3, ພຣະບິດາ ແລະ ພຣະບຸດ ອາດມາປະກົດດ້ວຍຕົວພຣະອົງເອງຕໍ່ມະນຸດ; 4–7, ເຫລົ່າທູດອາໄສຢູ່ໃນຂອບເຂດແຫ່ງຊັ້ນສູງ; 8–9, ໂລກຊັ້ນສູງຈະເປັນອຸລິມ ແລະ ທຸມມິມທີ່ຍິ່ງໃຫຍ່; 10–11, ຫີນຂາວມີໄວ້ໃຫ້ສຳລັບທຸກຄົນທີ່ເຂົ້າໄປໃນໂລກຊັ້ນສູງ; 12–17, ເວລາແຫ່ງການສະເດັດມາຄັ້ງທີສອງຖືກປົກປິດໄວ້ຈາກສາດສະດາ; 18–19, ຄວາມຮູ້ແຈ້ງທີ່ໄດ້ຮັບໃນຊີວິດນີ້ຈະລຸກຂຶ້ນກັບພວກເຂົາໃນການຟື້ນຄືນ*

**129** 1 *ກ* ຄມພ ສະຫວັນ.
*ຂ* ຄມພ ທູດ, ເທວະດາ.
*ຄ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
2 *ກ* ລກ 24:39.
3 *ກ* ຄມພ ວິນຍານ.
*ຂ* ຮຣ 12:23; ຄພ 76:69.
8 *ກ* 2 ກຣທ 11:14; 2 ນຟ 9:9.

*ຊີວິດ; 20–21, ພອນທັງປວງມາເຖິງໂດຍການເຊື່ອຟັງກົດ; 22–23, ພຣະບິດາ ແລະ ພຣະບຸດ ພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ.*

1 ເມື່ອ ພຣະ ຜູ້ ຊ່ວຍ ໃຫ້ ລອດ ຈະ [ກ]ມາ
ປະກົດ ພວກ ເຮົາ ຈະ ເຫັນ ພ ຣະ ອົງ ດັ່ງ ທີ່
ພຣະອົງເປັນຢູ່. ພວກເຮົາຈະເຫັນວ່າພຣະ
ອົງເປັນ [ຂ]ມະນຸດຄືກັນກັບພວກເຮົາ.
2 ແລະ ສັງຄົມດຽວກັນທີ່ມີຢູ່ໃນບັນດາ
ພວກເຮົາຢູ່ທີ່ນີ້ ຈະມີຢູ່ໃນບັນດາພວກເຮົາ
ຢູ່ທີ່ນັ້ນ, ພຽງແຕ່ມັນຈະຖືກຄຽງຄູ່ໄປກັບ
[ກ]ລັດສະໝີພາບນິລັນດອນ, ຊຶ່ງເປັນລັດສະ
ໝີພາບທີ່ພວກເຮົາບໍ່ໄດ້ຊື່ນຊົມໃນຕອນນີ້.
3 ໂຢຮັນ 14:23—ການ ປະກົດຂອງ
[ກ]ພຣະບິດາ ແລະ [ຂ]ພຣະບຸດ, ຢູ່ໃນຂໍ້ນັ້ນ,
ເປັນ [ຄ]ການປະກົດດ້ວຍຕົວຂອງພວກ
ພຣະອົງເອງ; ແລະ ແນວຄິດທີ່ວ່າພຣະ
ບິດາ ແລະ ພຣະບຸດ [ງ]ສະຖິດຢູ່ໃນໃຈຂອງ
ມະນຸດເປັນຄວາມເຊື່ອຂອງຄົນໃນນິກາຍ
ຕ່າງໆໃນສະໄໝກ່ອນ, ແລະ ຜິດ.
4 ໃນການຕອບຄຳຖາມ—ບໍ່ແມ່ນການ
ຄິດໄລ່ [ກ]ເວລາຂອງພຣະເຈົ້າ, ເວລາຂອງ
ທູດ, ເວລາຂອງສາດສະດາ, ແລະ ເວລາ
ຂອງມະນຸດ, ຕາມດາວພະເຄາະທີ່ພວກ
ເຂົາອາໄສຢູ່ບໍ?
5 ຂ້າພະເຈົ້າຕອບວ່າ, ແມ່ນແລ້ວ. ແຕ່
ບໍ່ມີ [ກ]ເຫລົ່າທູດຜູ້ປະຕິບັດຕໍ່ແຜ່ນດິນໂລກ
ນີ້ ນອກຈາກຄົນທີ່ເປັນຂອງມັນ ແລະ ເຄີຍ
ເປັນຂອງມັນ.
6 ເຫລົ່າທູດບໍ່ໄດ້ອາໄສຢູ່ເທິງດາວພະ
ເຄາະເໝືອນດັ່ງແຜ່ນດິນໂລກນີ້;
7 ແຕ່ເຫລົ່າທູດຜູ້ທີ່ຢູ່ໃນທີ່ປະທັບຂອງ
ພຣະເຈົ້າ, ໃນໂລກເໝືອນດັ່ງ [ກ]ທະເລແກ້ວ
ແລະ [ຂ]ໄຟ, ບ່ອນທີ່ທຸກສິ່ງສຳລັບລັດສະ
ໝີພາບຂອງພວກເພິ່ນຈະຖືກສະແດງໃຫ້
ປະຈັກ, ອະດີດ, ປະຈຸບັນ, ແລະ ອະນາຄົດ,
ແລະ ເປັນຢູ່ເຊັ່ນນັ້ນຢູ່ຕໍ່ພຣະພັກຂອງພຣະ
ຜູ້ເປັນເຈົ້າ.
8 ສະຖານທີ່ບ່ອນທີ່ພຣະເຈົ້າອາໄສຢູ່
ເປັນ [ກ]ອຸລິມ ແລະ ທຸມມິມທີ່ຍິ່ງໃຫຍ່.
9 [ກ]ແຜ່ນດິນໂລກນີ້, ໃນສະພາບທີ່ໄດ້
ຮັບການຊຳລະໃຫ້ບໍລິສຸດ ແລະ ອະມະຕະ
ຂອງມັນ, ຈະຖືກເຮັດໃຫ້ເປັນເໝືອນດັ່ງ
ແກ້ວໃສ ແລະ ຈະເປັນອຸລິມ ແລະ ທຸມມິມ
ແກ່ຜູ້ອາໄສຢູ່ໃນນັ້ນ, ຊຶ່ງໂດຍການນັ້ນ ທຸກ
ສິ່ງທັງປວງທີ່ກ່ຽວກັບອານາຈັກທີ່ຕ່ຳກວ່າ,
ຫລື ອານາຈັກທັງປວງຂອງລະບຽບທີ່ຕ່ຳ
ກວ່າ, ຈະສະແດງໃຫ້ປະຈັກແກ່ຄົນທີ່ອາ
ໄສຢູ່ໃນນັ້ນ; ແລະ ແຜ່ນດິນໂລກນີ້ຈະເປັນ
ຂອງພຣະຄຣິດ.
10 ຈາກນັ້ນ ຫີນຂາວທີ່ຖືກກ່າວເຖິງໃນ
ພຣະນິມິດ 2:17, ຈະກາຍເປັນອຸລິມ ແລະ
ທຸມມິມ ແກ່ທຸກຄົນທີ່ໄດ້ຮັບກ້ອນໜຶ່ງ, ຊຶ່ງ
ໂດຍການນີ້ ລະບຽບທີ່ສູງກວ່າຂອງອານາ
ຈັກຈະຖືກເຮັດໃຫ້ເປັນທີ່ຮູ້ຈັກ;

**130** 1 *ກ* 1 ຢຮ 3:2; ມຣນ 7:48. ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
*ຂ* ລກ 24:36–40.
2 *ກ* ຄມພ ລັດສະໝີພາບຂອງຊັ້ນສູງ.
3 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບຸດ.
*ຄ* ຄພ 93:1.
*ງ* ຄພ 130:22. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
4 *ກ* 2 ປຕ 3:8; ອຣຮ 3:4–10; ເບິ່ງອັບຣາ., ສຳເນົາ ເລກທີ 2, ຮູບທີ 1 ນຳອີກ.
5 *ກ* ຄມພ ທູດ, ເທວະດາ.
7 *ກ* ພນມ 4:6; 15:2.
*ຂ* ອຊຢ 33:14.
8 *ກ* ຄມພ ອຸລິມ ແລະ ທຸມມິມ.
9 *ກ* ຄພ 77:1. ຄມພ ແຜ່ນດິນໂລກ—ພາວະສຸດທ້າຍຂອງແຜ່ນດິນໂລກ.

11 ແລະ [ກ]ຫີນຂາວຈະຖືກມອບໃຫ້ແກ່ທຸກຄົນທີ່ເຂົ້າໄປໃນອານາຈັກຊັ້ນສູງ, ຊຶ່ງໃນທີ່ນັ້ນຈະຕ້ອງຂຽນຊື່ໃໝ່ໄວ້, ຊຶ່ງບໍ່ມີຄົນໃດຮູ້ຍົກເວັ້ນແຕ່ຜູ້ທີ່ໄດ້ຮັບມັນ. [ຂ]ຊື່ໃໝ່ເປັນຄຳໄຂ.

12 ຂ້າພະເຈົ້າທຳນາຍ, ໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ, ວ່າການເລີ່ມຕົ້ນຂອງ [ກ]ຄວາມທຸກຍາກລຳບາກ ຊຶ່ງຈະກໍ່ໃຫ້ເກີດການນອງເລືອດຄັ້ງໃຫຍ່ທີ່ຈະເກີດຂຶ້ນກ່ອນການສະເດັດມາ ຂອງບຸດມະນຸດຈະເກີດຂຶ້ນໃນລັດ [ຂ]ຊ້າວຄາໂຣໄລນາ.

13 ມັນອາດຈະເກີດຂຶ້ນຈາກບັນຫາເລື່ອງການເປັນທາດ. ສຽງໄດ້ປະກາດແກ່ຂ້າພະເຈົ້າ, ໃນຂະນະທີ່ຂ້າພະເຈົ້າອະທິຖານຢ່າງພາກພຽນແທ້ໆກ່ຽວກັບເລື່ອງນີ້, ວັນທີ 25 ເດືອນທັນວາ, 1832.

14 ເທື່ອໜຶ່ງ ຂ້າພະເຈົ້າໄດ້ອະທິຖານຢ່າງພາກພຽນເພື່ອວ່າ ຈະໄດ້ຮູ້ຈັກເວລາແຫ່ງ [ກ]ການສະເດັດມາຂອງບຸດມະນຸດ, ເມື່ອຂ້າພະເຈົ້າໄດ້ຍິນສຸລະສຽງຮັບສັ່ງດັ່ງຕໍ່ໄປນີ້:

15 ໂຈເຊັບ, ບຸດຂອງເຮົາ, ຖ້າຫາກເຈົ້າມີຊີວິດຢູ່ຈົນເຖິງອາຍຸແປດສິບຫ້າປີ, ເຈົ້າຈະເຫັນພຣະພັກຂອງບຸດມະນຸດ; ສະນັ້ນ ໃຫ້ສິ່ງນີ້ພຽງພໍ, ແລະ ຢ່າລົບກວນເຮົາອີກໃນເລື່ອງນີ້.

16 ຂ້າພະເຈົ້າຖືກປະໄວ້ເຊັ່ນນັ້ນ, ໂດຍປາດສະຈາກຄວາມສາມາດທີ່ຕັດສິນໃຈຖ້າຫາກວ່າການສະເດັດມາເທື່ອນີ້ອ້າງເຖິງການເລີ່ມຕົ້ນຂອງພັນປີ ຫລື ເປັນການປະກົດກ່ອນໜ້ານັ້ນ, ຫລື ວ່າຂ້າພະເຈົ້າຈະຕາຍ ແລ້ວຈຶ່ງຈະເຫັນພຣະພັກຂອງພຣະອົງ.

17 ຂ້າພະເຈົ້າເຊື່ອວ່າ ການສະເດັດມາຂອງບຸດມະນຸດຈະບໍ່ໄວກວ່າເວລານັ້ນ.

18 ຫລັກທຳແຫ່ງ [ກ]ຄວາມຮູ້ແຈ້ງໃດກໍຕາມທີ່ພວກເຮົາບັນລຸໃນຊີວິດນີ້, ມັນຈະລຸກຂຶ້ນກັບພວກເຮົາໃນ [ຂ]ການຟື້ນຄືນຊີວິດ.

19 ແລະ ຖ້າຫາກບຸກຄົນໃດບັນລຸ [ກ]ຄວາມຮູ້ ແລະ ຄວາມຮູ້ແຈ້ງໃນຊີວິດນີ້ຜ່ານ [ຂ]ຄວາມພາກພຽນ ແລະ [ຄ]ການເຊື່ອຟັງຂອງເຂົາຫລາຍກວ່າຄົນອື່ນເທົ່າໃດ, ບຸກຄົນນັ້ນກໍຈະ [ງ]ໄດ້ປຽບຄົນອື່ນຫລາຍກວ່າເທົ່ານັ້ນ ຢູ່ໃນໂລກທີ່ຈະມາເຖິງ.

20 ມີກົດ, ອອກ [ກ]ຄຳສັ່ງໄວ້ໃນສະຫວັນຢ່າງປ່ຽນແປງບໍ່ໄດ້ [ຂ]ກ່ອນການວາງຮາກຖານຂອງໂລກ, ຊຶ່ງໃນນັ້ນ [ຄ]ພອນທັງປວງໄດ້ຖືກກຳນົດໄວ້ແລ້ວ—

21 ແລະ ເມື່ອພວກເຮົາໄດ້ຮັບພອນປະການໃດຈາກພຣະເຈົ້າ, ຍ່ອມເປັນໄປເພາະການເຊື່ອຟັງຕໍ່ກົດນັ້ນ ຊຶ່ງມັນໄດ້ຖືກກຳນົດໄວ້ແລ້ວ.

22 [ກ]ພຣະບິດາມີພຣະກາຍທີ່ເປັນ [ຂ]ເນື້ອໜັງ ແລະ ກະດູກ ທີ່ສຳພັດໄດ້ດັ່ງຂອງມະນຸດ; ພຣະບຸດກໍຄືກັນ; ແຕ່ [ຄ]ພຣະວິນ

11 ກ ພນມ 2:17.
ຂ ອຊຢ 62:2.
12 ກ ຄພ 38:29; 45:63.
ຂ ຄພ 87:1–5.
14 ກ ຄນພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
18 ກ ຄນພ ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ.
ຂ ຄນພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
19 ກ ຄນພ ຄວາມຮູ້.
ຂ ຄນພ ພາກພຽນ, ຄວາມພາກພຽນ.
ຄ ຄນພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
ງ ແອວ 12:9–11.
20 ກ ຄພ 82:10.
ຂ ຄນພ ຊີວິດກ່ອນເກີດ.
ຄ ພບຍ 11:26–28; ຄພ 132:5. ຄນພ ພອນ, ໃຫ້ພອນ, ເປັນພອນ.
22 ກ ຄນພ ພຣະເຈົ້າ, ຝ່າຍພຣະເຈົ້າ.
ຂ ກຈກ 17:29.
ຄ ຄນພ ພຣະວິນຍານບໍລິສຸດ.

ຍານບໍລິສຸດບໍ່ມີພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ, ແຕ່ ເປັນພຣະກາຍທີ່ ເປັນ ພຣະວິນ ຍານ. ຖ້າ ຫາກບໍ່ ເປັນ ເຊັ່ນນັ້ນ, ພຣະວິນຍານບໍລິສຸດຈະສະຖິດຢູ່ໃນເຮົາບໍ່ ໄດ້.

23 ມະນຸດ ອາດ ຈະ ຮັບ ເອົາ [ກ]ພຣະ ວິນ ຍານບໍລິສຸດ, ແລະ ພຣະອົງອາດສະເດັດ ລົງມາຢູ່ເທິງເຂົາ ແລະ ບໍ່ສະຖິດຢູ່ຕໍ່ໄປກັບ ເຂົາກໍໄດ້.

# ພາກທີ 131

*ຄຳແນະນຳໂດຍໂຈເຊັບ ສະມິດ ຜູ້ເປັນສາດສະດາ, ມອບໃຫ້ທີ່ເມືອງຣາມັສ, ລັດອິລິນອຍ, ວັນທີ 16 ແລະ 17 ເດືອນພຶດສະພາ, 1843.*

*1–4, ການແຕ່ງງານຊັ້ນສູງເປັນສິ່ງຈຳເປັນຕໍ່ຄວາມສູງສົ່ງໃນສະຫວັນຊັ້ນສູງສຸດ; 5–6, ມີການອະທິບາຍເລື່ອງມະນຸດໄດ້ຖືກຜະນຶກໄວ້ສູ່ຊີວິດນິລັນດອນ; 7–8, ວິນຍານທັງປວງເປັນສານ.*

1 ໃນ ລັດ ສະ ໝີ ພາບ ຂອງ [ກ]ຊັ້ນ ສູງ ມີ ສະຫວັນ ຫລື ລະດັບສາມຊັ້ນ;
2 ແລະ ກ່ອນຈະໄດ້ບັນລຸເຖິງ [ກ]ຊັ້ນສູງ ສຸດໄດ້, ມະນຸດຕ້ອງເຂົ້າສູ່ລະບຽບນີ້ຂອງ ຖານະປະໂລຫິດ [ໝາຍເຖິງ [ຂ]ພັນທະສັນ ຍາໃໝ່ ແລະ ເປັນນິດຂອງການແຕ່ງງານ];
3 ແລະ ຖ້າຫາກເຂົາບໍ່ເຮັດ, ເຂົາຈະບັນ ລຸເຖິງມັນບໍ່ໄດ້.
4 ເຂົາຈະເຂົ້າໄປໃນຊັ້ນອື່ນ, ແຕ່ນັ້ນຄື ທີ່ສຸດຂອງອານາຈັກຂອງເຂົາ; ເຂົາບໍ່ສາ ມາດມີ [ກ]ເພີ່ມເຕີມ.
5 (ວັນທີ 17 ເດືອນພຶດສະພາ, 1843.) ຄຳຂອງ [ກ]ການທຳນາຍທີ່ແນ່ນອນແທ້ໆ ໝາຍເຖິງການທີ່ມະນຸດຮູ້ວ່າເຂົາຖືກ [ຂ]ຜະ ນຶກໄວ້ສູ່ [ຄ]ຊີວິດນິລັນດອນ, ໂດຍການເປີດ ເຜີຍ ແລະ ວິນຍານແຫ່ງການທຳນາຍ, ຜ່ານອຳນາດຂອງຖານະປະໂລຫິດສັກສິດ.
6 ເປັນໄປບໍ່ໄດ້ທີ່ມະນຸດຈະ [ກ]ລອດໃນ [ຂ]ຄວາມໂງ່ຈ້າ.
7 ບໍ່ມີສິ່ງໃດທີ່ຖືກເອີ້ນວ່າສານທີ່ບໍ່ມີຕົນ ມີຕົວ. [ກ]ວິນຍານທັງປວງເປັນສານ, ແຕ່ ມັນລະອຽດ ຫລື ບໍລິສຸດຫລາຍກວ່າ, ແລະ ສາມາດຫລິງເຫັນໄດ້ດ້ວຍຕາທີ່ [ຂ]ບໍລິສຸດ ຫລາຍກວ່າເທົ່ານັ້ນ;
8 ພວກ ເຮົາບໍ່ສາມາດຫລຽວເຫັນມັນ; ແຕ່ເມື່ອຮ່າງກາຍຂອງພວກເຮົາບໍລິສຸດ ແລ້ວ, ພວກເຮົາຈະເຫັນໄດ້ວ່າ ມັນເປັນ ສານທັງໝົດ.

---

23 *ກ* ຄມພ ຂອງປະທານແຫ່ງ ພຣະວິນຍານບໍລິສຸດ.
**131** 1 *ກ* ຄພ 76:70. ຄມພ ລັດສະໝີ ພາບຂອງຊັ້ນສູງ.
2 *ກ* ຄພ 132:5–21. ຄມພ ສູງສົ່ງ, ຄວາມສູງສົ່ງ.
*ຂ* ຄມພ ແຕ່ງງານ, ການ ແຕ່ງງານ—ພັນທະສັນ ຍາໃໝ່ ແລະ ເປັນນິດ ຂອງການແຕ່ງງານ.
4 *ກ* ຄພ 132:16–17.
5 *ກ* 2 ປຕ 1:19. ຄມພ ເອີ້ນ, ການເອີ້ນ ແລະ ການເລືອກ.
*ຂ* ຄພ 68:12; 88:4. ຄມພ ຜະນຶກ, ການຜະນຶກ.
*ຄ* ຄມພ ຊີວິດນິລັນດອນ.
6 *ກ* ຄມພ ລອດ, ຄວາມລອດ.
*ຂ* ຄພ 107:99–100.
7 *ກ* ຄມພ ວິນຍານ.
*ຂ* ຄພ 76:12; 97:16; ມຊ 1:11.

# ພາກທີ 132

*ການເປີດເຜີຍທີ່ມອບໃຫ້ຜ່ານ ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງນາວູ, ລັດອິລິນອຍ, ຖືກບັນທຶກໄວ້ໃນວັນທີ 12 ເດືອນກໍລະກົດ, 1843, ກ່ຽວກັບພັນທະສັນຍາໃໝ່ ແລະ ເປັນນິດ, ຮວມທັງພັນທະສັນຍາຊົ່ວນິລັນດອນຂອງການແຕ່ງງານ, ແລະ ຫລັກທຳຂອງການແຕ່ງເມຍຫລາຍຄົນນຳອີກ. ເຖິງແມ່ນວ່າການເປີດເຜີຍໄດ້ຖືກບັນທຶກໄວ້ໃນປີ 1843, ແຕ່ຫລັກຖານບົ່ງບອກວ່າ ຫລັກທຳບາງຢ່າງກ່ຽວກັບການເປີດເຜີຍນີ້ ໄດ້ຖືກເຮັດໃຫ້ເປັນທີ່ຮູ້ຈັກແກ່ສາດສະດາກ່ອນແລ້ວ ຕັ້ງແຕ່ປີ 1831. ເບິ່ງ ຂໍ້ປະກາດຢ່າງເປັນທາງການ 1.*

*1–6, ໄດ້ຮັບຄວາມສູງສົ່ງໂດຍຜ່ານພັນທະສັນຍາໃໝ່ ແລະ ເປັນນິດ; 7–14, ກົດ ແລະ ເງື່ອນໄຂຂອງພັນທະສັນຍານັ້ນໄດ້ຖືກຕັ້ງຂຶ້ນ; 15–20, ການແຕ່ງງານຊັ້ນສູງ ແລະ ຄວາມຕໍ່ເນື່ອງຂອງໜ່ວຍຄອບຄົວ ເຮັດໃຫ້ມະນຸດສາມາດກາຍເປັນພຣະເຈົ້າໄດ້; 21–25, ທາງຄັບ ແລະ ແຄບຈະນຳໄປສູ່ຊີວິດນິລັນດອນ, 26–27, ກົດກ່ຽວກັບການໝິ່ນປະໝາດພຣະວິນຍານບໍລິສຸດໄດ້ຖືກມອບໃຫ້; 28–39, ຄຳສັນຍາເຖິງການເພີ່ມພູນນິລັນດອນ ແລະ ຄວາມສູງສົ່ງໄດ້ຖືກເຮັດໄວ້ກັບສາດສະດາ ແລະ ໄພ່ພົນຂອງພຣະເຈົ້າໃນທຸກຍຸກທຸກສະໄໝ; 40–47, ໂຈເຊັບ ສະມິດ ໄດ້ຮັບອຳນາດທີ່ຈະຜູກ ແລະ ຜະນຶກໄວ້ເທິງແຜ່ນດິນໂລກ ແລະ ໃນສະຫວັນ; 48–50, ພຣະຜູ້ເປັນເຈົ້າໄດ້ຜະນຶກຄວາມສູງສົ່ງຂອງເພິ່ນໄວ້ເທິງເພິ່ນ; 51–57, ເອມມາ ສະມິດ ໄດ້ຖືກແນະນຳໃຫ້ຊື່ສັດ ແລະ ຈິງໃຈ; 58–66, ກົດເລື່ອງການແຕ່ງເມຍຫລາຍຄົນໄດ້ຖືກຕັ້ງຂຶ້ນ.*

1 ຕາມຄວາມຈິງແລ້ວ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ກັບເຈົ້າ ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ວ່າຕາບໃດທີ່ເຈົ້າໄດ້ຂໍຈາກມືຂອງເຮົາເພື່ອຈະໄດ້ຮູ້ ແລະ ເຂົ້າໃຈວ່າ, ເຮົາ, ພຣະຜູ້ເປັນເຈົ້າ, ຮັບຮອງຜູ້ຮັບໃຊ້ຂອງເຮົາອັບຣາຮາມ, ອີຊາກ, ແລະ ຢາໂຄບ, ໂມເຊກໍຄືກັນ, ດາວິດ ແລະ ໂຊໂລໂມນ, ຜູ້ຮັບໃຊ້ຂອງເຮົາ, ກ່ຽວກັບຫລັກທຳ ແລະ ຄຳສອນເລື່ອງການທີ່ພວກເຂົາມີ [ກ]ພັນລະຍາ ແລະ ເມຍນ້ອຍຫລາຍຄົນ—

2 ຈົ່ງເບິ່ງ, ແລະ ເບິ່ງແມ, ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ແລະ ຈະຕອບເຈົ້າກ່ຽວກັບເລື່ອງນີ້.

3 ສະນັ້ນ, ຈົ່ງ [ກ]ຕຽມໃຈຂອງເຈົ້າທີ່ຈະຮັບ ແລະ ເຊື່ອຟັງຄຳແນະນຳ ຊຶ່ງເຮົາກຳລັງຈະມອບໃຫ້ແກ່ເຈົ້າ; ເພາະວ່າຜູ້ຄົນທັງປວງທີ່ກົດນີ້ຖືກເປີດແກ່ພວກເຂົາຈະຕ້ອງເຊື່ອຟັງຕາມຄືກັນ.

4 ເພາະ ຈົ່ງ ເບິ່ງ, ເຮົາ ເປີດ ເຜີຍ ພັນທະສັນຍາໃໝ່ ແລະ ເປັນນິດແກ່ເຈົ້າ; ແລະ ຖ້າຫາກເຈົ້າບໍ່ປະຕິບັດຕາມ [ກ]ພັນທະສັນຍານັ້ນ, ເມື່ອນັ້ນເຈົ້າຈະ [ຂ]ອັບປະໂຫຍດ; ເພາະບໍ່ມີໃຜສາມາດ [ຄ]ປະຕິເສດພັນທະສັນຍານີ້ ແລະ ຖືກອະນຸຍາດໃຫ້ເຂົ້າໄປໃນລັດສະໝີພາບຂອງເຮົາໄດ້.

**132** 1*ກ* ຄພ 132:34, 37–39. ຄມພ ແຕ່ງງານ, ການແຕ່ງງານ—ການມີເມຍຫລາຍຄົນ.
3*ກ* ຄພ 29:8; 58:6; 78:7.
4*ກ* ຄມພ ພັນທະສັນຍາ.
*ຂ* ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
*ຄ* ຄພ 131:1–4.

5 ເພາະວ່າຜູ້ຄົນທັງປວງທີ່ຢາກມີ [ກ]ພອນຈາກມືຂອງເຮົາ ຈະປະຕິບັດຕາມ [ຂ]ກົດຊຶ່ງໄດ້ກຳນົດໄວ້ສຳລັບພອນນັ້ນ, ແລະ ເງື່ອນໄຂໃນນັ້ນ, ດັ່ງທີ່ໄດ້ແຕ່ງຕັ້ງໄວ້ແລ້ວແຕ່ກ່ອນການວາງຮາກຖານຂອງໂລກ.

6 ແລະ ດັ່ງທີ່ກ່ຽວກັບ [ກ]ພັນທະສັນຍາໃໝ່ ແລະ ເປັນນິດ, ມັນໄດ້ຖືກແຕ່ງຕັ້ງໄວ້ສຳລັບຄວາມສົມບູນແຫ່ງ [ຂ]ລັດສະໝີພາບຂອງເຮົາ; ແລະ ຄົນທີ່ໄດ້ຮັບຄວາມສົມບູນໃນນັ້ນຕ້ອງປະຕິບັດຕາມ ແລະ ຈະປະຕິບັດຕາມກົດ, ຖ້າບໍ່ດັ່ງນັ້ນ ເຂົາຈະອັບປະໂຫຍດ, ອົງພຣະຜູ້ເປັນເຈົ້າໄດ້ກ່າວ.

7 ແລະ ຕາມຄວາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ [ກ]ເງື່ອນໄຂຂອງກົດນີ້ຄື: ພັນທະສັນຍາ, ການສັນຍາ, ພັນທະການ, ພັນທະ, [ຂ]ຄຳສາບານ, ຄຳປະຕິຍານ, ການປະຕິບັດ, ຄວາມກ່ຽວພັນ, ຄວາມສຳພັນ, ຫລື ຄວາມຄາດຫວັງທັງປວງ, ທີ່ບໍ່ໄດ້ເຮັດ ແລະ ໄດ້ເຂົ້າສູ່ ແລະ ໄດ້ [ຄ]ຜະນຶກໂດຍ [ງ]ພຣະວິນຍານສັກສິດແຫ່ງຄຳສັນຍາ, ໂດຍຜູ້ທີ່ໄດ້ຮັບການເຈີມ, ທັງເພື່ອການເວລາ ແລະ ເພື່ອຕະຫລອດຊົ່ວນິລັນດອນ, ແລະ ເພື່ອຄວາມສັກສິດຫລາຍທີ່ສຸດຄືກັນ, ໂດຍ [ຈ]ການເປີດເຜີຍ ແລະ ບັນຍັດ ຜ່ານທາງຜູ້ໄດ້ຮັບການເຈີມຂອງເຮົາ, ຜູ້ທີ່ເຮົາໄດ້ກຳນົດໄວ້ຢູ່ເທິງແຜ່ນດິນໂລກໃຫ້ຖືອຳນາດນີ້ (ແລະ ເຮົາໄດ້ກຳນົດໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ໃຫ້ຖືອຳນາດນີ້ໃນຍຸກສຸດທ້າຍ, ແລະ ບໍ່ເຄີຍມີຜູ້ໃດຢູ່ເທິງແຜ່ນດິນໂລກ ບໍ່ວ່າຈະເປັນໃນເວລາໃດກໍຕາມ ຊຶ່ງອຳນາດນີ້ ແລະ [ສ]ຂໍກະແຈຂອງຖານະປະໂລຫິດນີ້ໄດ້ຖືກມອບໃຫ້), ຈະບໍ່ເກີດຜົນ, ບໍ່ມີປະສິດທິພາບ, ຫລື ພະລັງໃນ ແລະ ຫລັງຈາກການຟື້ນຄືນຊີວິດ; ເພາະສັນຍາທັງປວງທີ່ບໍ່ໄດ້ເຮັດໄວ້ເພື່ອຈຸດປະສົງນີ້ຈະສິ້ນສຸດລົງ ເມື່ອຄົນຕາຍໄປ.

8 ຈົ່ງເບິ່ງ, ບ້ານຂອງເຮົາເປັນບ້ານແຫ່ງລະບຽບ, ອົງພຣະຜູ້ເປັນເຈົ້າໄດ້ກ່າວ, ແລະ ບໍ່ແມ່ນບ້ານແຫ່ງຄວາມສັບສົນ.

9 ເຮົາຈະຍອມຮັບຈາກ [ກ]ເຄື່ອງຖວາຍທີ່ບໍ່ໄດ້ເຮັດໃນນາມຂອງເຮົາບໍ, ພຣະຜູ້ເປັນເຈົ້າໄດ້ກ່າວ?

10 ຫລື ເຮົາຈະຮັບຈາກມືຂອງພວກເຈົ້າສິ່ງທີ່ເຮົາບໍ່ໄດ້ [ກ]ກຳນົດບໍ?

11 ແລະ ເຮົາຈະກຳນົດແກ່ພວກເຈົ້າບໍ, ພຣະຜູ້ເປັນເຈົ້າໄດ້ກ່າວ, ຍົກເວັ້ນແຕ່ຈະເປັນໂດຍກົດ, ແມ່ນແຕ່ດັ່ງທີ່ເຮົາ ແລະ ພຣະບິດາຂອງເຮົາໄດ້ [ກ]ແຕ່ງຕັ້ງໄວ້ກັບພວກເຈົ້າ, ກ່ອນໂລກມີມາ?

12 ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ; ແລະ ເຮົາມອບບັນຍັດນີ້ໃຫ້ແກ່ພວກເຈົ້າ—ວ່າບໍ່ມີຄົນໃດຈະ [ກ]ມາຫາພຣະບິດາຍົກເວັ້ນແຕ່ໂດຍທາງເຮົາ ຫລື ໂດຍທາງຄຳຂອງເຮົາ, ຊຶ່ງເປັນກົດຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

13 ແລະ ທຸກສິ່ງທີ່ຢູ່ໃນໂລກ, ບໍ່ວ່າມັນຖືກແຕ່ງຕັ້ງຈາກມະນຸດ, ໂດຍບັນລັງ, ຫລື

5 ກ ຄພ 130:20–21.
ຂ ຄມພ ກົດ.
6 ກ ຄພ 66:2. ຄມພ ພັນທະສັນຍາໃໝ່ ແລະ ເປັນນິດ.
ຂ ຄພ 76:70, 92–96. ຄມພ ລັດສະໝີພາບຂອງຊັ້ນສູງ.
7 ກ ຄພ 88:38–39.
ຂ ຄມພ ຄຳສາບານ.
ຄ ຄມພ ຜະນຶກ, ການຜະນຶກ.
ງ ຄມພ ພຣະວິນຍານສັກສິດແຫ່ງຄຳສັນຍາ.
ຈ ຄມພ ເປີດເຜີຍ, ການເປີດເຜີຍ.
ສ ຄມພ ຂໍກະແຈຂອງຖານະປະໂລຫິດ.
9 ກ ມຣນ 7:5–6. ຄມພ ເສຍສະລະ, ການເສຍສະລະ.
10 ກ ລລວ 22:20–25; ມຊ 5:19–23.
11 ກ ຄພ 132:5.
12 ກ ຢຮ 14:6.

ເຂດປົກຄອງ, ຫລື ອຳນາດທັງໝົດ, ຫລື
ສິ່ງທີ່ມີຊື່, ບໍ່ວ່າຈະເປັນສິ່ງໃດກໍຕາມ, ຊຶ່ງບໍ່
ແມ່ນໂດຍທາງເຮົາ ຫລື ໂດຍທາງຄຳຂອງ
ເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ, ຈະຖືກໂຄ່ນ
ລົງ, ແລະ ຈະ [ກ]ບໍ່ເຫລືອຢູ່ຫລັງຈາກມະນຸດ
ຕາຍ, ບໍ່ທັງໃນ ຫລື ຫລັງຈາກຟື້ນຄືນຊີ
ວິດ, ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຈົ້າໄດ້ກ່າວ.

14 ເພາະສິ່ງໃດກໍຕາມທີ່ເຫລືອຢູ່ແມ່ນ
ໂດຍເຮົາ; ແລະ ສິ່ງໃດກໍຕາມທີ່ບໍ່ແມ່ນ
ໂດຍເຮົາຈະຖືກເຮັດໃຫ້ສັ່ນສະເທືອນ
ແລະ ຖືກທຳລາຍ.

15 ສະນັ້ນ, ຖ້າຫາກຜູ້ຊາຍ [ກ]ແຕ່ງເອົາ
ເມຍໃຫ້ຕົນຢູ່ໃນໂລກ, ແລະ ຖ້າຫາກລາວ
ບໍ່ໄດ້ແຕ່ງເອົານາງໂດຍເຮົາ ຫລື ໂດຍຄຳ
ຂອງເຮົາ, ແລະ ລາວໄດ້ເຮັດພັນທະສັນຍາ
ກັບນາງຕາບໃດທີ່ລາວຢູ່ໃນໂລກນີ້ ແລະ
ນາງຢູ່ກັບລາວ, ແລ້ວພັນທະສັນຍາ ແລະ
ການແຕ່ງງານຂອງພວກເຂົາທັງສອງຈະ
ບໍ່ມີຜົນເມື່ອພວກເຂົາຕາຍໄປ ແລະ ເມື່ອ
ພວກເຂົາໄປຈາກໂລກ; ສະນັ້ນ, ພວກເຂົາ
ຈຶ່ງບໍ່ໄດ້ຖືກຜູກມັດໄວ້ໂດຍກົດໃດໆເມື່ອ
ພວກເຂົາໄປຈາກໂລກ.

16 ສະນັ້ນ, ເມື່ອ ພວກ ເຂົາ ໄປ ຈາກ
ໂລກ, ພວກເຂົາຈຶ່ງບໍ່ໄດ້ແຕ່ງງານ ທັງບໍ່
ຖືກຍົກໃຫ້ [ກ]ແຕ່ງງານ; ແຕ່ຈະຖືກກຳນົດ
ໃຫ້ເປັນ [ຂ]ທູດໃນສະຫວັນ, ຊຶ່ງທູດເຫລົ່າ
ນັ້ນເປັນຜູ້ຮັບໃຊ້ປະຕິບັດ, ເພື່ອປະຕິບັດ
ແກ່ຄົນທີ່ມີຄ່າຄວນກັບນ້ຳໜັກແຫ່ງລັດສະ
ໝີພາບອັນເປັນນິດຫລາຍກວ່າ, ແລະ ຍິ່ງ
ໃຫຍ່ກວ່າ.

17 ເພາະທູດເຫລົ່ານີ້ບໍ່ໄດ້ປະຕິບັດຕາມ
ກົດຂອງເຮົາ; ສະນັ້ນ, ພວກເຂົາຈຶ່ງບໍ່ສາ
ມາດຂະຫຍາຍອອກໄປ, ແຕ່ຈະຄົງຢູ່ຕາມ
ລຳພັງ, ໂດຍປາດສະຈາກຄວາມສູງສົ່ງ,
ໃນສະພາບຄວາມລອດຂອງພວກເຂົາ,
ຈົນເຖິງຕະຫລອດຊົ່ວນິລັນດອນ; ແລະ
ຈາກນັ້ນໄປ ບໍ່ໄດ້ເປັນພຣະເຈົ້າ, ແຕ່ຈະ
ເປັນທູດຂອງພຣະເຈົ້າຕະຫລອດການ
ແລະ ຕະຫລອດໄປ.

18 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກ
ຜູ້ຊາຍແຕ່ງເອົາເມຍ, ແລະ ເຮັດພັນທະ
ສັນຍາກັບນາງເພື່ອການເວລາ ແລະ ເພື່ອ
ຕະຫລອດຊົ່ວນິລັນດອນ, ຖ້າຫາກພັນທະ
ສັນຍານັ້ນບໍ່ໄດ້ເປັນໂດຍເຮົາ ຫລື ໂດຍຄຳ
ຂອງເຮົາ ຊຶ່ງເປັນກົດຂອງເຮົາ, ແລະ ບໍ່ໄດ້
ຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງ
ຄຳສັນຍາ, ຜ່ານຄົນທີ່ເຮົາໄດ້ເຈີມໄວ້ ແລະ
ໄດ້ກຳນົດໄວ້ສູ່ອຳນາດນີ້, ແລ້ວ ພັນທະ
ສັນຍານີ້ຈະບໍ່ມີຜົນ ເມື່ອພວກເຂົາໄປຈາກ
ໂລກ, ເພາະວ່າພວກເຂົາບໍ່ໄດ້ມາຮວມກັນ
ໂດຍເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ, ທັງ
ບໍ່ໄດ້ມາຮ່ວມກັນໂດຍຄຳຂອງເຮົາ; ເມື່ອ
ພວກເຂົາອອກໄປຈາກໂລກ ຈະຮັບເອົາ
ມັນບໍ່ໄດ້ຢູ່ທີ່ນັ້ນ, ເພາະວ່າເຫລົ່າທູດ ແລະ
ພຣະເຈົ້າໄດ້ຖືກກຳນົດໄວ້ຢູ່ທີ່ນັ້ນ, ຜູ້ທີ່
ພວກເຂົາຈະຜ່ານບໍ່ໄດ້; ສະນັ້ນ ພວກເຂົາ
ຈຶ່ງບໍ່ສາມາດຮັບເອົາລັດສະໝີພາບຂອງ
ເຮົາເປັນມູນມໍລະດົກ; ເພາະວ່າບ້ານຂອງ
ເຮົາເປັນບ້ານແຫ່ງລະບຽບ, ອົງພຣະຜູ້ເປັນ
ເຈົ້າໄດ້ກ່າວ.

19 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບພວກເຈົ້າວ່າ ຖ້າຫາກ
ຜູ້ຊາຍແຕ່ງເອົາເມຍໂດຍພຣະຄຳຂອງ
ເຮົາ, ຊຶ່ງແມ່ນກົດຂອງເຮົາ, ແລະ ໂດຍ

13 ກ 3 ນຟ 27:10–11.
15 ກ ຄມພ ແຕ່ງງານ, ການແຕ່ງງານ.
16 ກ ມທ 22:23–33; ມຣກ 12:18–25; ລກ 20:27–36.
ຂ ຄມພ ທູດ, ເທວະດາ.

ກພັນທະສັນຍາໃໝ່ ແລະ ເປັນນິດ, ແລະ ຂຜະນຶກໄວ້ກັບພວກເຂົາໂດຍພຣະວິນຍານສັກສິດແຫ່ງ ຄຄຳສັນຍາ, ໂດຍຜູ້ທີ່ຖືກເຈີມ, ໃຫ້ແກ່ຜູ້ທີ່ເຮົາໄດ້ແຕ່ງຕັ້ງອຳນາດນີ້ ແລະ ງຂໍກະແຈຂອງຖານະປະໂລຫິດນີ້ໃຫ້; ແລະ ຈະກ່າວກັບພວກເຂົາ—ພວກເຈົ້າຈະອອກໄປໃນການຟື້ນຄືນຊີວິດຄັ້ງທຳອິດ; ແລະ ຖ້າຫາກມັນຈະເປັນຫລັງຈາກການຟື້ນຄືນຊີວິດຄັ້ງທຳອິດ, ໃນການຟື້ນຄືນຊີວິດຄັ້ງຕໍ່ໄປ; ແລະ ຈະໄດ້ຮັບ ຈບັນລັງ, ອານາຈັກ, ເຂດປົກຄອງ, ແລະ ອຳນາດ, ການຄອບຄອງ, ສູງສຸດ ແລະ ເລິກສຸດທັງປວງ—ເມື່ອນັ້ນ ມັນຈະຖືກຂຽນໄວ້ໃນ ສທະບຽນແຫ່ງຊີວິດຂອງພຣະເມສານ້ອຍ, ວ່າເຂົາຈະບໍ່ເຮັດການຄາດຕະກຳ ຊຶ່ງໂດຍການນັ້ນຈະເຮັດໃຫ້ຄົນບໍລິສຸດຕ້ອງເສຍຊີວິດ, ແລະ ຖ້າຫາກພວກເຈົ້າປະຕິບັດຕາມພັນທະສັນຍາຂອງເຮົາ, ແລະ ບໍ່ເຮັດການຄາດຕະກຳ ຊຶ່ງໂດຍການນັ້ນບໍ່ເຮັດໃຫ້ຄົນບໍລິສຸດຕ້ອງເສຍຊີວິດ, ແລ້ວມັນຈະບັງເກີດກັບພວກເຂົາໃນທຸກສິ່ງທັງປວງບໍ່ວ່າອັນໃດກໍຕາມທີ່ຜູ້ຮັບໃຊ້ຂອງເຮົາໃຫ້ໄວ້ແກ່ພວກເຂົາ, ໃນການເວລາ, ແລະ ຕະຫລອດຊົ່ວນິລັນດອນ; ແລະ ມັນຈະເກີດຜົນ ເມື່ອພວກເຂົາອອກໄປຈາກໂລກ; ແລະ ພວກເຂົາຈະຜ່ານເຫລົ່າທູດ, ແລະ ບັນດາພຣະເຈົ້າໄປ, ຊຶ່ງຖືກຈັດໄວ້ໃນທີ່ນັ້ນ, ໄປສູ່ ຊຄວາມສູງສົ່ງ ແລະ ລັດສະໝີພາບຂອງພວກເຂົາໃນທຸກສິ່ງທັງປວງ, ດັ່ງທີ່ຖືກຜະນຶກໄວ້ເທິງຫົວຂອງພວກເຂົາ, ຊຶ່ງລັດສະໝີພາບນີ້ຈະເປັນຄວາມສົມບູນ ແລະ ຄວາມຕໍ່ເນື່ອງຂອງເຊື້ອສາຍຕະຫລອດການ ແລະ ຕະຫລອດໄປ.

20 ເມື່ອນັ້ນ ພວກເຂົາຈະເປັນພຣະເຈົ້າ, ເພາະວ່າພວກເຂົາບໍ່ມີທີ່ສິ້ນສຸດ; ສະນັ້ນພວກເຂົາຈະດຳລົງຢູ່ຈາກເປັນນິດເຖິງເປັນນິດ, ເພາະພວກເຂົາດຳເນີນຕໍ່ເນື່ອງໄປ; ເມື່ອນັ້ນພວກເຂົາຈະຢູ່ເໜືອທຸກສິ່ງທັງປວງ, ເພາະວ່າທຸກສິ່ງທັງປວງຂຶ້ນຢູ່ກັບພວກເຂົາ. ເມື່ອນັ້ນພວກເຂົາຈະເປັນ ກພຣະເຈົ້າ, ເພາະວ່າພວກເຂົາມີ ຂອຳນາດທັງປວງ, ແລະ ເຫລົ່າທູດຂຶ້ນຢູ່ກັບພວກເຂົາ.

21 ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບພວກເຈົ້າ, ຍົກເວັ້ນແຕ່ພວກເຈົ້າຈະປະຕິບັດຕາມ ກກົດຂອງເຮົາ, ພວກເຈົ້າຈະບໍ່ສາມາດບັນລຸເຖິງລັດສະໝີພາບນີ້.

22 ເພາະວ່າປະຕູທີ່ນຳໄປສູ່ຄວາມສູງສົ່ງ ແລະ ກຊີວິດທີ່ດຳເນີນຕໍ່ເນື່ອງກໍ ຂຄັບ, ແລະ ຄທາງກໍແຄບ, ແລະ ບໍ່ມີຫລາຍຄົນພົບທາງນີ້, ເພາະວ່າພວກເຈົ້າບໍ່ໄດ້ຮັບເອົາເຮົາຢູ່ໃນໂລກ ທັງພວກເຈົ້າບໍ່ຮູ້ຈັກເຮົາ.

23 ແຕ່ຖ້າຫາກພວກເຈົ້າໄດ້ຮັບເອົາເຮົາຢູ່ໃນໂລກ, ເມື່ອນັ້ນພວກເຈົ້າຈະຮູ້ເຮົາ, ແລະ ຈະໄດ້ຮັບຄວາມສູງສົ່ງຂອງພວກ

---

19 ກ ຄມພ ແຕ່ງງານ, ການແຕ່ງງານ—ພັນທະສັນຍາໃໝ່ ແລະ ເປັນນິດຂອງການແຕ່ງງານ.
ຂ ຄມພ ຜະນຶກ, ການຜະນຶກ.
ຄ ຄພ 76:52–53; 88:3–4.
ງ ຄມພ ຂໍກະແຈຂອງຖານະປະໂລຫິດ.
ຈ ອພຍ 19:5–6; ພນມ 5:10; 20:6; ຄພ 76:56; 78:15, 18.
ສ ຄມພ ໜັງສືທະບຽນແຫ່ງຊີວິດ.
ຊ ຄມພ ສູງສົ່ງ, ຄວາມສູງສົ່ງ.
20 ກ ມທ 25:21; ຄພ 29:12–13; 132:37. ຄມພ ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ.
ຂ ຄພ 50:26–29; 76:94–95; 84:35–39.
21 ກ ຄມພ ກົດ.
22 ກ ຄພ 132:30–31.
ຂ ລກ 13:24; 2 ນຟ 33:9; ຣລມ 3:29–30.
ຄ ມທ 7:13–14, 23; 2 ນຟ 9:41; 31:17–21.

ເຈົ້າ; ເພື່ອວ່າເຮົາຢູ່ [ກ]ບ່ອນໃດ ພວກເຈົ້າ
ຈະຢູ່ບ່ອນນັ້ນຄືກັນ.
24 ນີ້ຄື [ກ]ຊີວິດນິລັນດອນທັງຫລາຍ—
ທີ່ຈະຮູ້ຈັກພຣະເຈົ້າທີ່ສະຫລຽວສະຫລາດ
ແລະ ທ່ຽງແທ້, ແລະ ພຣະເຢຊູຄຣິດ, ຜູ້ທີ່
ພຣະອົງໄດ້ [ຂ]ສົ່ງມາ. ເຮົາຄືຜູ້ນັ້ນ. ສະນັ້ນ
ພວກເຈົ້າຈົ່ງຮັບເອົາກົດຂອງເຮົາ.
25 ປະຕູທີ່ ນຳໄປສູ່ [ກ]ຄວາມຕາຍກໍ
[ຂ]ກວ້າງ ແລະ ທາງກໍໃຫຍ່; ແລະ ມີຫລາຍ
ຄົນເຂົ້າໄປໃນທາງນັ້ນ, ເພາະວ່າພວກເຂົາ
ບໍ່ [ຄ]ຮັບເອົາເຮົາ, ທັງພວກເຂົາບໍ່ປະຕິບັດ
ຕາມກົດຂອງເຮົາ.
26 ຕາມ ຈິງ, ຕາມ ຈິງ ແລ້ວ, ເຮົາ ກ່າວ
ກັບພວກເຈົ້າ, ຖ້າຫາກຜູ້ຊາຍ ແຕ່ງເອົາ
ເມຍຕາມຄຳຂອງເຮົາ ແລະ ພວກເຂົາໄດ້
ຜະນຶກໂດຍ [ກ]ພຣະວິນຍານສັກສິດແຫ່ງ
ຄຳສັນຍາ, ຕາມຂໍ້ກຳນົດຂອງເຮົາ, ແລະ
ລາວ ຫລື ນາງຈະເຮັດບາບໃດໆ ຫລື ລ່ວງ
ລະເມີດພັນທະສັນຍາໃໝ່ ແລະ ເປັນນິດ ບໍ່
ວ່າອັນໃດກໍຕາມ, ແລະ ການໝິ່ນປະໝາດ
ນາໆປະການ, ແລະ ຖ້າຫາກພວກເຂົາບໍ່
[ຂ]ເຮັດການຄາດຕະກຳ ຊຶ່ງໂດຍການນັ້ນບໍ່
ເຮັດໃຫ້ຄົນບໍລິສຸດຕ້ອງເສຍຊີວິດ, ພວກ
ເຂົາຈະອອກມາໃນການຟື້ນຄືນຊີວິດຄັ້ງ
ທຳອິດ, ແລະ ເຂົ້າໄປໃນຄວາມສູງສົ່ງຂອງ
ພວກເຂົາ; ແຕ່ພວກເຂົາຈະຖືກທຳລາຍໃນ
ເນື້ອໜັງ, ແລະ ຈະຖືກ [ຄ]ສົ່ງໄປຮັບຄວາມ
ທຸກທໍລະມານຂອງ [ງ]ຊາຕານຈົນເຖິງວັນ
ແຫ່ງການໄຖ່, ອົງພຣະຜູ້ເປັນເຈົ້າໄດ້ກ່າວ.
27 [ກ]ການໝິ່ນປະໝາດພຣະວິນຍານບໍລິ
ສຸດ, ຊຶ່ງຈະ [ຂ]ບໍ່ຖືກອະໄພໃຫ້ຢູ່ໃນໂລກ ຫລື
ເມື່ອອອກໄປຈາກໂລກ, ຄືພວກເຈົ້າໄດ້
ເຮັດການຄາດຕະກຳ ຊຶ່ງໃນການນັ້ນພວກ
ເຈົ້າໄດ້ເຮັດໃຫ້ຄົນບໍລິສຸດຕ້ອງເສຍຊີວິດ,
ແລະ ເຫັນພ້ອມກັບການຕາຍຂອງເຮົາ,
ຫລັງຈາກພວກເຈົ້າໄດ້ຮັບເອົາພັນທະສັນ
ຍາໃໝ່ ແລະ ເປັນນິດຂອງເຮົາ, ອົງພຣະ
ຜູ້ເປັນເຈົ້າໄດ້ກ່າວ; ແລະ ຄົນທີ່ບໍ່ປະຕິບັດ
ຕາມກົດນີ້ ຈະບໍ່ມີທາງເຂົ້າໄປໃນລັດສະໝີ
ພາບຂອງເຮົາໄດ້, ແຕ່ຈະ [ຄ]ອັບປະໂຫຍດ,
ພຣະຜູ້ເປັນເຈົ້າໄດ້ກ່າວ.
28 ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ເຈົ້າ, ແລະ ຈະມອບກົດຂອງຖານະປະໂລ
ຫິດສັກສິດຂອງເຮົາໃຫ້ແກ່ເຈົ້າ, ດັ່ງທີ່ໄດ້
ຖືກແຕ່ງຕັ້ງໄວ້ໂດຍເຮົາ ແລະ ພຣະບິດາ
ຂອງເຮົາກ່ອນໂລກເປັນມາ.
29 [ກ]ອັບຣາຮາມໄດ້ຮັບທຸກສິ່ງທັງປວງ,
ສິ່ງໃດກໍຕາມທີ່ລາວໄດ້ຮັບ, ໂດຍການ
ເປີດເຜີຍ ແລະ ບັນຍັດ, ໂດຍຄຳຂອງເຮົາ,
ພຣະຜູ້ເປັນເຈົ້າໄດ້ກ່າວ, ແລະ ໄດ້ເຂົ້າໄປ
ສູ່ຄວາມສູງສົ່ງຂອງລາວ ແລະ ນັ່ງຢູ່ເທິງ
ບັນລັງຂອງລາວ.
30 ອັບຣາຮາມໄດ້ຮັບ [ກ]ຄຳສັນຍາກ່ຽວ
ກັບລູກຫລານຂອງລາວ, ແລະ ກ່ຽວກັບ

23 ກ ຢຣ 14:2–3.
24 ກ ຢຣ 17:3.
ຄມພ ຊີວິດນິລັນດອນ.
ຂ ຢຣ 3:16–17;
ຄພ 49:5.
25 ກ ຄມພ ຄວາມຕາຍ
ທາງວິນຍານ.
ຂ ມທ 7:13–14;
3 ນຟ 14:13–15.
ຄ ຢຣ 5:43.
26 ກ ຄມພ ພຣະວິນຍານສັກ
ສິດແຫ່ງຄຳສັນຍາ.
ຂ ແອວ 39:5–6.
ຄ ຄພ 82:21; 104:9–10.
ງ ຄມພ ມານ.
27 ກ ຄມພ ບາບທີ່ອະໄພ
ໃຫ້ບໍ່ໄດ້;
ໝິ່ນປະໝາດ, ການ
ໝິ່ນປະໝາດ.
ຂ ມທ 12:31–32;
ຮຣ 6:4–6;
ຄພ 76:31–35.
ຄມພ ບຸດແຫ່ງ
ຄວາມຈິບຫາຍ.
ຄ ຄມພ ອັບປະໂຫຍດ,
ຄວາມອັບປະໂຫຍດ.
29 ກ ຄມພ ອັບຣາຮາມ.
30 ກ ປຖກ 12:1–3; 13:16.
ຄມພ ພັນທະສັນຍາຂອງ
ອັບຣາຮາມ;
ອັບຣາຮາມ—ເຊື້ອສາຍ
ຂອງອັບຣາຮາມ.

ຜົນ ແອວ ຂອງ ລາວ—ຈາກ [ຂ]ແອວ ຂອງ ຜູ້
ນັ້ນທີ່ເຈົ້າໄດ້ເກີດມາ, ນັ້ນຄື, ຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ—ຊຶ່ງຕ້ອງດຳເນີນຕໍ່ໄປຕາບ
ໃດທີ່ພວກເຂົາຍັງຢູ່ໃນໂລກ; ແລະ ດັ່ງທີ່
ກ່ຽວກັບອັບຣາຮາມ ແລະ ລູກຫລານຂອງ
ລາວ, ພວກເຂົາຈະດຳເນີນສືບຕໍ່ໄປຫລັງ
ຈາກອອກໄປ ຈາກ ໂລກນີ້ແລ້ວ; ທັງ ໃນ
ໂລກ ແລະ ເມື່ອອອກໄປຈາກໂລກແລ້ວ
ພວກເຂົາຈະດຳເນີນສືບຕໍ່ໄປເປັນຈຳນວນ
ຫລວງຫລາຍເໝືອນດັ່ງ [ຄ]ດວງດາວ; ຫລື,
ຖ້າ ຫາກພວກ ເຈົ້າ ຈະ ນັບ ດິນ ຊາຍ ເທິງ
ແຄມຝັ່ງທະເລ ພວກເຈົ້າກໍບໍ່ສາມາດນັບ
ມັນໄດ້.

31 ຄຳ ສັນ ຍາ ນີ້ ເປັນ ຂອງ ພວກ ເຈົ້າ
ເໝືອນ ກັນ, ເພາະວ່າພວກເຈົ້າເປັນຂອງ
[ກ]ອັບຣາຮາມ, ແລະ ຄຳສັນຍາໄດ້ຖືກເຮັດ
ໄວ້ກັບອັບຣາຮາມ; ແລະ ໂດຍກົດນີ້ ຈຶ່ງມີ
ຄວາມຕໍ່ເນື່ອງໃນວຽກງານຂອງພຣະບິດາ
ຂອງ ເຮົາ, ຊຶ່ງ ໃນ ການ ນັ້ນ ພຣະ ອົງ ໄດ້
ຖວາຍບາລະມີແດ່ພຣະອົງເອງ.

32 ສະນັ້ນ, ພວກເຈົ້າຈົ່ງໄປ, ແລະ ເຮັດ
[ກ]ວຽກງານຂອງອັບຣາຮາມ; ພວກເຈົ້າຈົ່ງ
ເຂົ້າມາໃນກົດຂອງເຮົາ ແລະ ພວກເຈົ້າຈະ
ລອດ.

33 ແຕ່ຖ້າຫາກພວກເຈົ້າບໍ່ໄດ້ເຂົ້າມາໃນ
ກົດ ຂອງເຮົາ, ພວກ ເຈົ້າ ຈະ ບໍ່ ສາ ມາດ ໄດ້
ຮັບຄຳສັນຍາຂອງພຣະບິດາຂອງເຮົາ, ຊຶ່ງ
ພຣະອົງໄດ້ເຮັດໄວ້ກັບອັບຣາຮາມ.

34 ພຣະ ເຈົ້າ ໄດ້ [ກ]ບັນ ຊາ ອັບ ຣາ ຮາມ,
ແລະ [ຂ]ຊາຣາກໍໄດ້ມອບນາງ [ຄ]ຮາກາໃຫ້
ເປັນເມຍຂອງອັບຣາຮາມ. ແລະ ດ້ວຍ
ເຫດໃດນາງຈຶ່ງເຮັດແນວນັ້ນ? ເພາະສິ່ງ
ນັ້ນເປັນກົດ; ແລະ ຈາກນາງຮາກາຈຶ່ງມີຜູ້
ຄົນເກີດມາຢ່າງຫລວງຫລາຍ. ສະນັ້ນ, ສິ່ງ
ນີ້ຈຶ່ງໄດ້ເຮັດໃຫ້ຄຳສັນຍາສຳເລັດໃນທ່າມ
ກາງສິ່ງອື່ນໆ.

35 ສະນັ້ນ, ອັບຣາຮາມຢູ່ພາຍໃຕ້ການ
ກ່າວ ໂທດ ບໍ? ຕາມຄວາມຈິງແລ້ວ ເຮົາ
ກ່າວ ກັບ ພວກ ເຈົ້າ, ບໍ່ເລີຍ; ເພາະເຮົາ,
ພຣະຜູ້ເປັນເຈົ້າ, ໄດ້ [ກ]ບັນຊາເລື່ອງນີ້.

36 ອັບຣາ ຮາມຖືກ [ກ]ບັນ ຊາ ໃຫ້ ຖວາຍ
ລູກຊາຍຂອງລາວ [ຂ]ອີຊາກ; ເຖິງຢ່າງໃດກໍ
ຕາມ, ມັນມີຂຽນໄວ້ວ່າ: ຢ່າ [ຄ]ຂ້າຄົນ. ເຖິງ
ຢ່າງໃດກໍຕາມ, ອັບຣາຮາມບໍ່ໄດ້ປະຕິເສດ,
ແລະ ມັນຖືກນັບວ່າເປັນ [ງ]ຄວາມຊອບທຳ
ແກ່ລາວ.

37 ອັບຣາຮາມໄດ້ຮັບເອົາ [ກ]ສາວໃຊ້ມາ
ເປັນເມຍ, ແລະ ພວກນາງໄດ້ເກີດລູກໃຫ້
ລາວຫລາຍຄົນ; ແລະ ມັນຖືກນັບວ່າເປັນ
ຄວາມຊອບທຳແກ່ລາວ, ເພາະພວກນາງ
ໄດ້ຖືກມອບໃຫ້ແກ່ລາວ, ແລະ ລາວກໍໄດ້
ປະຕິບັດຕາມກົດຂອງເຮົາ; ດັ່ງອີຊາກນຳ
ອີກ ແລະ [ຂ]ຢາໂຄບ ບໍ່ໄດ້ເຮັດສິ່ງອື່ນໃດ
ນອກຈາກສິ່ງທີ່ພວກເຂົາໄດ້ຮັບບັນຊາ;
ແລະ ເພາະວ່າພວກເຂົາບໍ່ໄດ້ເຮັດສິ່ງອື່ນ
ໃດນອກຈາກສິ່ງທີ່ພວກເຂົາໄດ້ຮັບບັນຊາ,
ພວກເຂົາຈຶ່ງໄດ້ເຂົ້າໄປໃນ [ຄ]ຄວາມສູງສົ່ງ
ຂອງພວກເຂົາ, ຕາມຄຳສັນຍາ, ແລະ ນັ່ງຢູ່

30 *ຂ* 2 ນຟ 3:6–16.
*ຄ* ປຖກ 15:5; 22:17.
31 *ກ* ຄພ 86:8–11; 110:12.
32 *ກ* ຢຮ 8:39;
ແອວ 5:22–24.
34 *ກ* ປຖກ 16:1–3.
*ຂ* ຄມພ ຊາຣາ.
*ຄ* ປຖກ 25:12–18.
ຄມພ ຮາກາ.
35 *ກ* ຢຄ 2:24–30.
36 *ກ* ປຖກ 22:2–12.
*ຂ* ຄມພ ອີຊາກ.
*ຄ* ອພຍ 20:13.
*ງ* ຢຄ 4:5.
ຄມພ ຊອບທຳ,
ຄວາມຊອບທຳ.
37 *ກ* ອສ ເມຍຄົນອື່ນໆ.
ປຖກ 25:5–6.
*ຂ* ປຖກ 30:1–4;
ຄພ 133:55.
ຄມພ ຢາໂຄບ, ລູກ
ຊາຍຂອງອີຊາກ.
*ຄ* ຄມພ ສູງສົ່ງ, ຄວາມສູງສົ່ງ;
ມະນຸດ—ມະນຸດ, ສັກ
ກະຍະພາບທີ່ຈະກາຍ
ເປັນເໝືອນດັ່ງພຣະ
ບິດາເທິງສະຫວັນ.

ເທິງບັນລັງ, ແລະ ບໍ່ໄດ້ເປັນເຫລົ່າທູດ ແຕ່
ເປັນພຣະເຈົ້າ.
38 [ກ]ດາວິດກໍໄດ້ມີ [ຂ]ເມຍ ແລະ ສາວໃຊ້
ຫລາຍຄົນ, ແລະ ໂຊໂລໂມນ ແລະ ໂມເຊ
ຜູ້ຮັບ ໃຊ້ ຂອງເຮົາກໍຄືກັນ, ເຊັ່ນດຽວກັບ
ຜູ້ຮັບໃຊ້ຄົນອື່ນໆຂອງເຮົາຫລາຍຄົນນຳ
ອີກ, ຕັ້ງແຕ່ຕົ້ນຂອງການສ້າງໂລກຈົນເຖິງ
ເວລານີ້; ແລະ ພວກເຂົາບໍ່ໄດ້ເຮັດບາບ
ແນວໃດນອກຈາກສິ່ງເຫລົ່ານັ້ນທີ່ພວກ
ເຂົາບໍ່ໄດ້ຖືກຮັບຮູ້ຈາກເຮົາ.
39 ເຮົາໄດ້ [ກ]ມອບເມຍ ແລະ ສາວໃຊ້ໃຫ້
ດາວິດ, ໂດຍມືຂອງນາທານ, ຜູ້ຮັບໃຊ້ຂອງ
ເຮົາ, ແລະ ຄົນອື່ນໆທີ່ເປັນສາດສະດາ ຜູ້ມີ
[ຂ]ຂໍກະແຈແຫ່ງອຳນາດນີ້; ແລະ ບໍ່ມີອັນໃດ
ໃນສິ່ງເຫລົ່ານີ້ທີ່ລາວໄດ້ເຮັດບາບຕໍ່ເຮົາ
ຍົກເວັ້ນແຕ່ໃນກໍລະນີຂອງ [ຄ]ອູຣີອາ ແລະ
ເມຍຂອງລາວ; ແລະ, ສະນັ້ນ ລາວຈຶ່ງໄດ້
ຕົກຈາກຄວາມສູງສົ່ງຂອງລາວ, ແລະ ໄດ້
ຮັບສ່ວນຂອງລາວ; ແລະ ລາວຈະບໍ່ໄດ້ຮັບ
ພວກນາງເມື່ອໄປຈາກໂລກ, ເພາະເຮົາໄດ້
[ງ]ມອບພວກນາງໃຫ້ແກ່ອີກຄົນໜຶ່ງ, ພຣະຜູ້
ເປັນເຈົ້າໄດ້ກ່າວ.
40 ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງເຈົ້າ, ແລະ ເຮົາໄດ້ມອບໜ້າທີ່ຮັບ
ຜິດຊອບໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ແລະ ໃຫ້ [ກ]ຟື້ນຟູທຸກສິ່ງທັງປວງ. ໃຫ້ຂໍສິ່ງ
ໃດກໍຕາມທີ່ເຈົ້າປະສົງ, ແລະ ມັນຈະຖືກ
ມອບໃຫ້ແກ່ເຈົ້າຕາມຄຳຂອງເຮົາ.
41 ແລະ ເພາະວ່າເຈົ້າໄດ້ຖາມກ່ຽວກັບ
ການລ່ວງປະເວນີ, ຕາມຈິງ, ຕາມຈິງແລ້ວ,
ເຮົາກ່າວກັບເຈົ້າ, ຖ້າຫາກຜູ້ຊາຍໄດ້ແຕ່ງ
ເອົາເມຍໃນພັນທະສັນຍາໃໝ່ ແລະ ເປັນ
ນິດ, ແລະ ຖ້າຫາກນາງຢູ່ກັບຜູ້ຊາຍຄົນ
ອື່ນ, ແລະ ເຮົາບໍ່ໄດ້ກຳນົດໄວ້ໃຫ້ນາງໂດຍ
ການເຈີມອັນສັກສິດ, ນາງກໍໄດ້ລ່ວງປະເວ
ນີ ແລະ ຈະຖືກທຳລາຍ.
42 ຖ້າຫາກນາງບໍ່ໄດ້ຢູ່ໃນພັນທະສັນຍາ
ໃໝ່ ແລະ ເປັນນິດ, ແລະ ນາງຢູ່ກັບຊາຍ
ຄົນອື່ນ, ນາງກໍໄດ້ [ກ]ຫລິ້ນຊູ້.
43 ແລະ ຖ້າຫາກຜົວຂອງນາງຢູ່ກັບຍິງ
ຄົນອື່ນ, ແລະ ລາວຢູ່ພາຍໃຕ້ [ກ]ຄຳປະຕິ
ຍານ, ລາວກໍໄດ້ຝ່າຝືນຄຳປະຕິຍານຂອງ
ລາວ ແລະ ໄດ້ຫລິ້ນຊູ້.
44 ແລະ ຖ້າຫາກນາງບໍ່ໄດ້ຫລິ້ນຊູ້, ແຕ່
ເປັນຜູ້ບໍລິສຸດ ແລະ ບໍ່ໄດ້ຝ່າຝືນຄຳປະຕິ
ຍານຂອງນາງ, ແລະ ນາງຮູ້ຈັກມັນ, ແລະ
ເຮົາເປີດເຜີຍມັນແກ່ເຈົ້າ, ຜູ້ຮັບໃຊ້ຂອງ
ເຮົາ ໂຈເຊັບ, ເມື່ອນັ້ນເຈົ້າຈະມີອຳນາດ,
ໂດຍອຳນາດຂອງຖານະປະໂລຫິດສັກສິດ
ຂອງເຮົາ, ທີ່ຈະຮັບນາງ ແລະ ມອບນາງ
ໃຫ້ຄົນທີ່ບໍ່ໄດ້ຫລິ້ນຊູ້ ແຕ່ [ກ]ຊື່ສັດ; ເພາະ
ເຂົາຈະຖືກເຮັດໃຫ້ເປັນຜູ້ປົກຄອງຫລາຍ
ສິ່ງ.
45 ເພາະເຮົາໄດ້ມອບ [ກ]ຂໍກະແຈ ແລະ
ອຳນາດຂອງຖານະປະໂລຫິດໃຫ້ແກ່ເຈົ້າ,
ຊຶ່ງໃນການນີ້ ເຮົາຈະໄດ້ [ຂ]ຟື້ນຟູທຸກສິ່ງທັງ
ປວງ, ແລະ ເຮັດໃຫ້ທຸກສິ່ງທັງປວງເປັນທີ່ຮູ້
ຈັກແກ່ເຈົ້າໃນເວລາອັນເໝາະສົມ.

38 *ກ* ຄມພ ດາວິດ.
*ຂ* 1 ຊມອ 25:42–43; 2 ຊມອ 5:13; 1 ກສ 11:1–3.
39 *ກ* 2 ຊມອ 12:7–8.
*ຂ* ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຄ* 2 ຊມອ 11:4, 27; 12:9; 1 ກສ 15:5. ຄມພ ຄາດຕະກຳ, ການຄາດຕະກຳ; ຫລິ້ນຊູ້.
*ງ* ຍມຢ 8:10.
40 *ກ* ຈສ—ປ 1:33. ຄມພ ການຟື້ນຟູພຣະກິດຕິຄຸນ.
42 *ກ* ຄພ 42:22–26.
43 *ກ* ຄມພ ແຕ່ງງານ, ການແຕ່ງງານ; ພັນທະສັນຍາ.
44 *ກ* ຄມພ ພິມມະຈັນ.
45 *ກ* ຄມພ ຂໍກະແຈຂອງຖານະປະໂລຫິດ.
*ຂ* ກຈກ 3:21; ຄພ 86:10. ຄມພ ການຟື້ນຟູພຣະກິດຕິຄຸນ.

46 ແລະ ຕາມ ຈິງ, ຕາມ ຈິງ ແລ້ວ, ເຮົາ
ກ່າວກັບເຈົ້າ, ວ່າສິ່ງໃດກໍຕາມທີ່ເຈົ້າ [ກ]ຜະ
ນຶກໄວ້ເທິງແຜ່ນດິນໂລກ ຈະຖືກຜະນຶກໄວ້
ໃນສະຫວັນ; ແລະ ສິ່ງໃດກໍຕາມທີ່ເຈົ້າຜູກ
ໄວ້ເທິງແຜ່ນດິນໂລກ, ໃນນາມຂອງເຮົາ
ແລະ ໂດຍຄຳຂອງເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ, ມັນຈະຖືກຜູກໄວ້ເປັນນິລັນດອນ
ໃນສະຫວັນ; ແລະ ບາບຂອງຜູ້ໃດກໍຕາມ
ເຈົ້າ [ຂ]ປົດຢູ່ເທິງແຜ່ນດິນໂລກ ຈະຖືກປົດ
ເປັນນິລັນດອນໃນສະຫວັນ; ແລະ ບາບ
ຂອງຜູ້ໃດກໍຕາມທີ່ເຈົ້າຈະກັກໄວ້ຢູ່ເທິງ
ແຜ່ນດິນໂລກ ຈະຖືກກັກໄວ້ໃນສະຫວັນ.
47 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວວ່າ ຜູ້ໃດກໍຕາມທີ່ເຈົ້າຈະ
ໃຫ້ພອນ ເຮົາຈະໃຫ້ພອນ, ແລະ ຜູ້ໃດກໍ
ຕາມທີ່ເຈົ້າຈະສາບແຊ່ງ ເຮົາຈະ [ກ]ສາບ
ແຊ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວ; ເພາະເຮົາ,
ພຣະຜູ້ເປັນເຈົ້າ, ເປັນພຣະເຈົ້າຂອງເຈົ້າ.
48 ແລະ ອີກເທື່ອໜຶ່ງ, ຕາມຄວາມຈິງ
ແລ້ວ ເຮົາກ່າວກັບເຈົ້າ, ຜູ້ຮັບໃຊ້ຂອງເຮົາ
ໂຈເຊັບ, ວ່າສິ່ງໃດກໍຕາມທີ່ເຈົ້າໄດ້ມອບ
ໃຫ້ຢູ່ເທິງແຜ່ນດິນໂລກ, ແລະ ບຸກຄົນໃດ
ກໍຕາມທີ່ເຈົ້າໄດ້ມອບໃຫ້ຜູ້ໃດຢູ່ເທິງແຜ່ນ
ດິນໂລກ, ໂດຍຄຳຂອງເຮົາ ແລະ ຕາມ
ກົດຂອງເຮົາ, ຈະຖືກມາຢ້ຽມຢາມໂດຍ
ພອນ ແລະ ບໍ່ແມ່ນການສາບແຊ່ງ, ແລະ
ດ້ວຍອຳນາດຂອງເຮົາ, ພຣະຜູ້ເປັນເຈົ້າ
ໄດ້ກ່າວ, ແລະ ຈະປາດສະຈາກການກ່າວ
ໂທດເທິງແຜ່ນດິນໂລກ ແລະ ໃນສະຫວັນ.
49 ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງເຈົ້າ, ແລະ ຈະຢູ່ກັບ
ເຈົ້າແມ່ນແຕ່ຈົນເຖິງຄາວ [ກ]ສິ້ນສຸດໂລກ,
ແລະ ຕະຫລອດຊົ່ວນິລັນດອນ; ເພາະ
ຕາມຄວາມຈິງແລ້ວ ເຮົາ [ຂ]ຜະນຶກ [ຄ]ຄວາມ
ສູງສົ່ງໄວ້ເທິງເຈົ້າ, ແລະ ຕຽມບັນລັງໄວ້ໃຫ້
ເຈົ້າໃນອານາຈັກຂອງພຣະບິດາຂອງເຮົາ,
ພ້ອມກັບອັບຣາຮາມ [ງ]ບັນພະບຸລຸດຂອງ
ເຈົ້າ.
50 ຈົ່ງ ເບິ່ງ, ເຮົາ ໄດ້ ເຫັນ [ກ]ການ ເສຍ
ສະລະຂອງເຈົ້າ, ແລະ ຈະໃຫ້ອະໄພບາບ
ທັງໝົດຂອງເຈົ້າ; ເຮົາເຫັນການເສຍສະລະ
ຂອງເຈົ້າໃນການເຊື່ອຟັງຕໍ່ສິ່ງທີ່ເຮົາໄດ້
ບອກເຈົ້າ. ສະນັ້ນ, ຈົ່ງໄປ, ແລະ ເຮົາໄດ້ຕຽມ
ທາງສຳລັບການຫລົບໜີຂອງເຈົ້າ, ດັ່ງທີ່
ເຮົາໄດ້ [ຂ]ຮັບເອົາເຄື່ອງຖວາຍຂອງອັບຣາ
ຮາມ ຊຶ່ງເປັນລູກຊາຍຂອງລາວ ອີຊາກ.
51 ຕາມຄວາມຈິງແລ້ວ, ເຮົາກ່າວກັບ
ເຈົ້າວ່າ: ເຮົາຈະມອບບັນຍັດຂໍ້ໜຶ່ງໃຫ້ແກ່
ສາວໃຊ້ຂອງເຮົາ, ເອມມາ ສະມິດ, ເມຍ
ຂອງເຈົ້າ, ຜູ້ຊຶ່ງເຮົາໄດ້ມອບໃຫ້ແກ່ເຈົ້າ,
ວ່າໃຫ້ນາງຢັບຢັ້ງຕົນເອງ ແລະ ບໍ່ໃຫ້ຮັບ
ເອົາສິ່ງທີ່ເຮົາໄດ້ບັນຊາໃຫ້ເຈົ້າສະເໜີແກ່
ນາງ; ເພາະວ່າເຮົາໄດ້ເຮັດສິ່ງນັ້ນ, ພຣະ
ຜູ້ເປັນເຈົ້າໄດ້ກ່າວ, ເພື່ອພິສູດພວກເຈົ້າ
ທຸກຄົນ, ດັ່ງທີ່ເຮົາໄດ້ເຮັດກັບອັບຣາຮາມ,
ແລະ ເພື່ອວ່າເຮົາຈະໄດ້ຮຽກຮ້ອງຈາກມື
ຂອງເຈົ້າ, ໂດຍພັນທະສັນຍາ ແລະ ການ
ເສຍສະລະ.
52 ແລະ ໃຫ້ສາວໃຊ້ຂອງເຮົາ, [ກ]ເອມມາ
ສະມິດ, ຮັບເອົາທຸກຄົນທີ່ໄດ້ຖືກມອບໃຫ້
ແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ແລະ ຜູ້ທີ່ມີ
ຄຸນນະທຳ ແລະ ບໍລິສຸດຢູ່ຕໍ່ໜ້າເຮົາ; ແລະ

46 *ກ* ຄມພ ຜະນຶກ, ການຜະນຶກ.
*ຂ* ຄມພ ປົດບາບ, ການປົດບາບ.
47 *ກ* ປຖກ 12:1–3; ຄພ 124:93.
49 *ກ* ມທ 28:20.
*ຂ* ຄພ 68:12.
*ຄ* ຄພ 5:22. ຄມພ ເອີ້ນ, ການເອີ້ນ ແລະ ການເລືອກ.
*ງ* ປຖກ 17:1–8; 2 ນຟ 8:2.
50 *ກ* ຄມພ ເສຍສະລະ, ການເສຍສະລະ.
*ຂ* ປຖກ 22:10–14; ຄພ 97:8.
52 *ກ* ຄມພ ສະມິດ, ເອມມາ ເຮວ.

ຜູ້ຄົນ ທີ່ບໍ່ບໍລິສຸດ, ແລະ ໄດ້ກ່າວວ່າພວກ
ເຂົາບໍລິສຸດ, ຈະຖືກທຳລາຍ, ອົງພຣະຜູ້
ເປັນເຈົ້າໄດ້ກ່າວ.
53 ເພາະເຮົາຄືພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຈົ້າ, ແລະ ພວກເຈົ້າ
ຕ້ອງເຊື່ອຟັງສຸລະສຽງຂອງເຮົາ; ແລະ ເຮົາມອບ
ໃຫ້ແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ວ່າລາວ
ຈະຖືກເຮັດໃຫ້ເປັນຜູ້ປົກຄອງໃນສິ່ງຂອງ
ຫລາຍຢ່າງ; ເພາະລາວໄດ້ [ກ]ຊື່ສັດໃນສິ່ງ
ຂອງເລັກໜ້ອຍ, ແລະ ນັບແຕ່ນີ້ຕໍ່ໄປເຮົາ
ຈະເຮັດໃຫ້ລາວເຂັ້ມແຂງຂຶ້ນ.
54 ແລະ ເຮົາບັນຊາສາວໃຊ້ຂອງເຮົາ,
ເອມມາ ສະມິດ, ໃຫ້ຢູ່ຕໍ່ໄປ ແລະ ຕິດພັນ
ຢູ່ກັບຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, ແລະ ບໍ່
ໃຫ້ມີຄົນອື່ນອີກ. ແຕ່ຖ້າຫາກນາງບໍ່ປະຕິ
ບັດຕາມບັນຍັດຂໍ້ນີ້ ນາງຈະຖືກທຳລາຍ,
ພຣະຜູ້ເປັນເຈົ້າໄດ້ກ່າວ; ເພາະເຮົາຄືພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ,
ແລະ ຈະທຳລາຍນາງ ຖ້າຫາກນາງບໍ່ປະຕິ
ບັດຕາມກົດຂອງເຮົາ.
55 ແຕ່ ຖ້າ ຫາກ ນາງ ບໍ່ ປະ ຕິ ບັດ ຕາມ
ບັນ ຍັດ ຂໍ້ ນີ້, ເມື່ອນັ້ນຜູ້ຮັບ ໃຊ້ ຂອງ ເຮົາ
ໂຈເຊັບ ຈະເຮັດທຸກສິ່ງທັງປວງໃຫ້ນາງ,
ແມ່ນແຕ່ດັ່ງທີ່ລາວໄດ້ກ່າວ; ແລະ ເຮົາຈະ
ອວຍພອນລາວ ແລະ ຂະຫຍາຍເຜົ່າພັນ
ຂອງລາວ ແລະ ໃຫ້ແກ່ລາວ [ກ]ຮ້ອຍເທົ່າ
ໃນໂລກນີ້, ດ້ວຍພໍ່ແມ່, ອ້າຍເອື້ອຍນ້ອງ,
ບ້ານ ເຮືອນ ແລະ ດິນ ດອນ ຕ່ອນ ຫຍ້າ,
ເມຍ ແລະ ລູກ, ແລະ ມົງກຸດແຫ່ງ [ຂ]ຊີວິດນິ
ລັນດອນທັງຫລາຍ ໃນໂລກນິລັນດອນທັງ
ຫລາຍ.
56 ແລະ ອີກ ເທື່ອ ໜຶ່ງ, ຕາມ ຄວາມ ຈິງ
ແລ້ວ ເຮົາກ່າວວ່າ ໃຫ້ສາວໃຊ້ ຂອງເຮົາ
ໃຫ້ [ກ]ອະໄພແກ່ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ
ໃນຄວາມຜິດຂອງລາວ; ແລະ ຈາກນັ້ນ
ນາງຈະໄດ້ຮັບການອະໄພໃຫ້ໃນຄວາມ
ຜິດຂອງນາງ, ຊຶ່ງໃນການນັ້ນ ນາງໄດ້ເຮັດ
ຜິດກັບເຮົາ; ແລະ ເຮົາ, ພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງພວກເຈົ້າ, ຈະໃຫ້ພອນ
ນາງ, ແລະ ໃຫ້ນາງຂະຫຍາຍເຜົ່າພັນ,
ແລະ ເຮັດໃຫ້ໃຈຂອງນາງປິຕິຍິນດີ.
57 ແລະ ອີກເທື່ອໜຶ່ງ, ເຮົາກ່າວວ່າ ຢ່າ
ໃຫ້ຜູ້ຮັບໃຊ້ຂອງເຮົາ ໂຈເຊັບ ປ່ອຍຊັບສິນ
ຂອງລາວໃຫ້ຫລຸດໄປຈາກມືຂອງລາວ, ຖ້າ
ບໍ່ດັ່ງນັ້ນສັດຕູຈະມາ ແລະ ທຳລາຍລາວ;
ເພາະຊາຕານ [ກ]ສະແຫວງຫາທີ່ຈະທຳ
ລາຍ; ເພາະເຮົາຄືພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຈົ້າ, ແລະ ລາວຄືຜູ້
ຮັບໃຊ້ຂອງເຮົາ; ແລະ ຈົ່ງເບິ່ງ, ແລະ ເບິ່ງ
ແມ, ເຮົາຢູ່ກັບລາວ, ດັ່ງທີ່ເຮົາໄດ້ຢູ່ກັບອັບ
ຣາຮາມ, ບັນພະບຸລຸດຂອງພວກເຈົ້າ, ແມ່ນ
ແຕ່ຈົນເຖິງ [ຂ]ຄວາມສູງສົ່ງ ແລະ ລັດສະໝີ
ພາບຂອງລາວ.
58 ບັດນີ້, ກ່ຽວກັບກົດຂອງ [ກ]ຖານະປະ
ໂລຫິດ, ມີຫລາຍສິ່ງກ່ຽວຂ້ອງກັບເລື່ອງນີ້.
59 ຕາມຄວາມຈິງແລ້ວ, ຖ້າຫາກຊາຍ
ຄົນໜຶ່ງຖືກເອີ້ນຈາກພຣະບິດາຂອງເຮົາ,
ເຊັ່ນດຽວກັບ [ກ]ອາໂຣນ, ໂດຍສຸລະສຽງຂອງເຮົາ
ເອງ, ແລະ ໂດຍສຸລະສຽງຂອງພຣະອົງເອງ
ຜູ້ໄດ້ສົ່ງເຮົາມາ, ແລະ ເຮົາໄດ້ມອບ [ຂ]ຂໍ
ກະແຈແຫ່ງອຳນາດຂອງຖານະປະໂລຫິດ
ໃຫ້ລາວ, ຖ້າຫາກລາວເຮັດສິ່ງໃດກໍຕາມ

53 ກ ມທ 25:21;
ຄພ 52:13.
55 ກ ມຣກ 10:28–31.
ຂ ຄມພ ຄອບຄົວ—
ຄອບຄົວນິລັນດອນ;
ຊີວິດນິລັນດອນ.
56 ກ ຄມພ ອະໄພ, ໃຫ້ອະໄພ.
57 ກ ມທ 10:28.
ຂ ຄມພ ສູງສົ່ງ, ຄວາມສູງສົ່ງ.
58 ກ ຄພ 84:19–26.
ຄມພ ຖານະປະໂລຫິດ.
59 ກ ຮຣ 5:4.
ຄມພ ອາໂຣນ, ອ້າຍ
ຂອງໂມເຊ.
ຂ ຄມພ ຂໍກະແຈຂອງ
ຖານະປະໂລຫິດ.

ໃນນາມຂອງເຮົາ, ແລະ ຕາມກົດຂອງເຮົາ
ແລະ ໂດຍຄຳຂອງເຮົາ, ລາວຈະບໍ່ເຮັດບາບ,
ແລະ ເຮົາຈະຮັບຮອງລາວ.
60 ສະນັ້ນ, ຢ່າໃຫ້ຜູ້ໃດດູຖູກຜູ້ຮັບໃຊ້
ຂອງເຮົາ ໂຈເຊັບ; ເພາະວ່າເຮົາຈະຮັບ
ຮອງລາວ; ເພາະວ່າລາວຈະທຳການເສຍ
ສະລະ ຊຶ່ງເຮົາໄດ້ຮຽກຮ້ອງຈາກມືຂອງ
ລາວສຳລັບການລ່ວງລະເມີດຂອງລາວ,
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຈົ້າໄດ້ກ່າວ.
61 ແລະ ອີກເທື່ອໜຶ່ງ, ກ່ຽວກັບກົດຂອງ
ຖານະປະໂລຫິດ—ຖ້າຫາກຜູ້ຊາຍຄົນໃດ
ແຕ່ງງານກັບ [ກ]ຍິງບໍລິສຸດ, ແລະ ປາດຖະ
ໜາທີ່ຈະແຕ່ງງານກັບ [ຂ]ຄົນອື່ນ, ແລະ ຄົນ
ທຳອິດຍິນຍອມ, ແລະ ຖ້າຫາກລາວແຕ່ງ
ງານກັບຄົນທີສອງ, ແລະ ທັງສອງເປັນຍິງ
ບໍລິສຸດ, ແລະ ບໍ່ໄດ້ໃຫ້ຄຳປະຕິຍານກັບ
ຊາຍຄົນອື່ນ, ເມື່ອນັ້ນລາວກໍເຮັດຖືກຕ້ອງ;
ລາວບໍ່ໄດ້ຫລິ້ນຊູ້ເພາະວ່າພວກເຂົາໄດ້ຖືກ
ມອບໃຫ້ແກ່ລາວ; ເພາະວ່າລາວຈະຫລິ້ນ
ຊູ້ບໍ່ໄດ້ກັບຄົນທີ່ເປັນຂອງລາວ ແລະ ບໍ່ໄດ້
ເປັນຂອງຄົນອື່ນ.
62 ແລະ ຖ້າຫາກຜູ້ຍິງບໍລິສຸດສິບຄົນຖືກ
ມອບໃຫ້ແກ່ລາວໂດຍກົດນີ້, ລາວກໍບໍ່ໄດ້
ຫລິ້ນຊູ້, ເພາະວ່າພວກເຂົາເປັນຂອງລາວ,
ແລະ ພວກເຂົາໄດ້ຖືກມອບໃຫ້ແກ່ລາວ;
ສະນັ້ນ ລາວເຮັດຖືກຕ້ອງ.
63 ແຕ່ ຖ້າຫາກຄົນໜຶ່ງຄົນໃດໃນບັນດາ
ຜູ້ຍິງບໍລິສຸດສິບຄົນນີ້, ຫລັງຈາກນາງໄດ້
ແຕ່ງງານແລ້ວ, ໄດ້ສົນສູ່ຢູ່ກັບຊາຍຄົນອື່ນ,
ນາງກໍໄດ້ຫລິ້ນຊູ້, ແລະ ຈະຖືກທຳລາຍ;
ເພາະວ່າພວກເຂົາໄດ້ຖືກມອບໃຫ້ແກ່ລາວ
ເພື່ອ [ກ]ຂະຫຍາຍເຜົ່າພັນ ແລະ ເພີ່ມທະວີ
ຈົນເຕັມແຜ່ນດິນໂລກ, ຕາມບັນຍັດຂອງ
ເຮົາ, ແລະ ບັນລຸຄຳສັນຍາ ຊຶ່ງຖືກມອບ
ໃຫ້ໂດຍພຣະບິດາກ່ອນການວາງຮາກ
ຖານຂອງໂລກ, ແລະ ເພື່ອຄວາມສູງສົ່ງ
ຂອງພວກເຂົາໃນໂລກນິລັນດອນ, ເພື່ອວ່າ
ພວກເຂົາຈະໃຫ້ກຳເນີດຈິດວິນຍານຂອງ
ມະນຸດ; ເພາະວ່າໃນການນັ້ນເປັນ [ຂ]ວຽກ
ງານຂອງພຣະບິດາຂອງເຮົາດຳເນີນຕໍ່ໄປ,
ເພື່ອວ່າພຣະອົງຈະຖືກສັນລະເສີນ.
64 ແລະ ອີກເທື່ອໜຶ່ງ, ຕາມຈິງ, ຕາມ
ຈິງແລ້ວ, ເຮົາກ່າວກັບພວກເຈົ້າ, ຖ້າຫາກ
ຜູ້ຊາຍຄົນໃດມີເມຍ, ຜູ້ຖືຂໍກະແຈຂອງ
ອຳນາດນີ້, ແລະ ລາວສິດສອນກົດຂອງ
ຖານະປະໂລຫິດຂອງເຮົາໃຫ້ແກ່ນາງ,
ກ່ຽວກັບສິ່ງເຫລົ່ານີ້, ຈາກນັ້ນນາງຈະເຊື່ອ
ແລະ ປະຕິບັດແກ່ລາວ, ຖ້າບໍ່ດັ່ງນັ້ນນາງ
ຈະຖືກທຳລາຍ, ພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຈົ້າໄດ້ກ່າວ; ເພາະວ່າ
ເຮົາຈະທຳລາຍນາງ; ເພາະວ່າເຮົາຈະຂະ
ຫຍາຍຊື່ຂອງເຮົາກັບທຸກຄົນຜູ້ໄດ້ຮັບ ແລະ
ປະຕິບັດຕາມກົດຂອງເຮົາ.
65 ສະນັ້ນ, ສິ່ງນີ້ຈະຖືກຕ້ອງຕາມກົດໃນ
ເຮົາ, ຖ້າຫາກນາງບໍ່ຮັບເອົາກົດນີ້, ເພາະ
ວ່າລາວຈະຮັບເອົາທຸກສິ່ງທັງປວງບໍ່ວ່າອັນ
ໃດກໍຕາມທີ່ເຮົາ, ພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງລາວ, ຈະມອບໃຫ້ແກ່ລາວ,
ເພາະວ່ານາງບໍ່ເຊື່ອ ແລະ ປະຕິບັດແກ່
ລາວຕາມຄຳຂອງເຮົາ; ແລະ ຈາກນັ້ນນາງ
ຈະກາຍເປັນຜູ້ລ່ວງລະເມີດ; ແລະ ລາວ
ໄດ້ຖືກຍົກເວັ້ນຈາກກົດຂອງຊາຣາ, ຜູ້ປະ
ຕິບັດແກ່ອັບຣາຮາມຕາມກົດ ເມື່ອເຮົາໄດ້
ບັນຊາອັບຣາຮາມໃຫ້ເອົານາງຮາກາມາ
ເປັນເມຍ.

61 *ກ* ຄມພ ຄົນບໍລິສຸດ.
*ຂ* ຂປ 1.
ຄມພ ແຕ່ງງານ, ການ
ແຕ່ງງານ—ການມີ
ເມຍຫລາຍຄົນ.
63 *ກ* ປຖກ 1:26–28;
ຢຄ 2:30.
*ຂ* ມຊ 1:39.

66 ແລະ ບັດນີ້, ກ່ຽວກັບກົດນີ້, ຕາມ
ຈິງ, ຕາມຈິງແລ້ວ, ເຮົາກ່າວກັບພວກເຈົ້າ,
ເຮົາຈະເປີດເຜີຍຕື່ມອີກແກ່ພວກເຈົ້າ, ໃນ
ພາຍຫລັງ; ສະນັ້ນ, ໃຫ້ສິ່ງນີ້ພຽງພໍສຳລັບ
ຕອນນີ້. ຈົ່ງເບິ່ງ, ເຮົາຄືອາລະຟາ ແລະ ໂອ
ເມຄາ. ອາແມນ.

# ພາກທີ 133

*ການເປີດເຜີຍທີ່ມອບໃຫ້ຜ່ານໂຈເຊັບ ສະມິດ ຜູ້ເປັນສາດສະດາ, ທີ່ເມືອງໄຮຣໍາ, ລັດໂອໄຮໂອ, ວັນທີ 3 ເດືອນພະຈິກ, 1831. ໃນບົດຄຳນຳຕໍ່ການເປີດເຜີຍນີ້ ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ, "ໃນເວລານີ້ມີຫລາຍເລື່ອງ ຊຶ່ງພວກແອວເດີປາດຖະໜາທີ່ຈະຮູ້ກ່ຽວກັບການສັ່ງສອນພຣະກິດຕິຄຸນແກ່ຜູ້ອາໄສຂອງແຜ່ນດິນໂລກ, ແລະ ກ່ຽວກັບການເຕົ້າໂຮມ; ແລະ ໃນການດຳລົງຊີວິດໂດຍຄວາມສະຫວ່າງທີ່ແທ້ຈິງ, ແລະ ໄດ້ຮັບການແນະນຳຈາກເບື້ອງບົນ, ໃນວັນທີ 3 ເດືອນພະຈິກ, 1831, ຂ້າພະເຈົ້າໄດ້ທູນຖາມພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການເປີດເຜີຍທີ່ສຳຄັນດັ່ງຕໍ່ໄປນີ້." ໃນຕອນທຳອິດ ພາກນີ້ໄດ້ຖືກຕື່ມໃສ່ໃນພຣະຄຳພີ ຄຳສອນ ແລະ ພັນທະສັນຍາ ເປັນພາກທ້ອຍທ້າຍ ແລະ ຕໍ່ມາໄດ້ຖືກຈັດໃຫ້ເປັນພາກໜຶ່ງໃນພຣະຄຳພີນີ້.*

*1–6, ໄພ່ພົນຂອງພຣະເຈົ້າໄດ້ຖືກບັນຊາໃຫ້ຕຽມພ້ອມສຳລັບການສະເດັດມາຄັ້ງທີສອງ; 7–16, ມະນຸດທຸກຄົນໄດ້ຖືກບັນຊາໃຫ້ໜີຈາກບາບີໂລນ, ມາສູ່ຊີໂອນ, ແລະ ຕຽມພ້ອມສຳລັບວັນອັນຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ; 17–35, ພຣະອົງຈະປະທັບຢືນຢູ່ເທິງພູຊີໂອນ, ທະວີບທັງຫລາຍຈະກາຍເປັນຜືນແຜ່ນດິນດຽວ, ແລະ ບັນດາເຜົ່າທີ່ສູນຫາຍໄປຂອງອິດສະຣາເອນຈະກັບຄືນມາ; 36–40, ພຣະກິດຕິຄຸນໄດ້ຖືກຟື້ນຟູຄືນມາໃໝ່ຜ່ານໂຈເຊັບ ສະມິດ ເພື່ອຈະຖືກສັ່ງສອນໃນທົ່ວໂລກ; 41–51, ພຣະຜູ້ເປັນເຈົ້າຈະສະເດັດລົງມາໃນການແກ້ແຄ້ນຄົນຊົ່ວ; 52–56, ມັນຈະເປັນປີແຫ່ງການໄຖ່ຂອງພຣະອົງ; 57–74, ພຣະກິດຕິຄຸນຕ້ອງຖືກສົ່ງອອກໄປເພື່ອຊ່ວຍກູ້ໄພ່ພົນຂອງພຣະເຈົ້າ ແລະ ເພື່ອນຳຄວາມພິນາດມາສູ່ຄົນຊົ່ວ.*

1 ຈົ່ງເຊື່ອຟັງ, ໂອ້ ພວກເຈົ້າຜູ້ຄົນແຫ່ງ
ສາດສະໜາຈັກຂອງເຮົາ, ພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຈົ້າໄດ້ກ່າວ,
ແລະ ຟັງຄຳຂອງພຣະຜູ້ເປັນເຈົ້າກ່ຽວກັບ
ພວກເຈົ້າ—
2 ພຣະຜູ້ເປັນເຈົ້າ ຜູ້ຈະ [ກ]ສະເດັດມາທີ່
ພຣະວິຫານຂອງພຣະອົງໃນທັນທີ; ພຣະ
ຜູ້ເປັນເຈົ້າ ຜູ້ຈະສະເດັດມາເທິງໂລກດ້ວຍ
[ຂ]ການພິພາກສາດ້ວຍການສາບແຊ່ງ; ແທ້
ຈິງແລ້ວ, ເທິງປະຊາຊາດທັງປວງທີ່ລືມ
ພຣະເຈົ້າ, ແລະ ເທິງຄົນອະທຳທັງປວງໃນ
ບັນດາພວກເຈົ້າ.
3 ເພາະພຣະອົງຈະ [ກ]ກາງແຂນອັນສັກ
ສິດຂອງພຣະອົງໃນສາຍຕາຂອງປະຊາ
ຊາດທັງປວງ, ແລະ ທົ່ວທີ່ສຸດຂອງແຜ່ນ

**133** 2 *ກ* ມລກ 3:1; ຄພ 36:8.
2 *ຂ* ຄພ 1:36. ຄມພ ພຣະເຢຊູຄຣິດ—ພິພາກສາ.
3 *ກ* ອຊຢ 52:10.

ດິນໂລກຈະເຫັນ [ຂ]ການຊ່ວຍໃຫ້ລອດຂອງ
ພຣະເຈົ້າຂອງພວກເຮົາ.
4 ດັ່ງນັ້ນ, ຈົ່ງຕຽມພ້ອມ, ຈົ່ງຕຽມພ້ອມ,
ໂອ້ ຜູ້ຄົນຂອງເຮົາ; ຈົ່ງຊໍາລະຕົນເອງໃຫ້
ບໍລິສຸດ; ເຕົ້າໂຮມກັນ, ໂອ້ ພວກເຈົ້າຜູ້ຄົນ
ແຫ່ງສາດສະໜາຈັກຂອງເຮົາ, ຢູ່ເທິງແຜ່ນ
ດິນຊີໂອນ, ພວກເຈົ້າທຸກຄົນທີ່ບໍ່ໄດ້ຮັບບັນ
ຊາໃຫ້ຢູ່ຕໍ່ໄປ.
5 ຈົ່ງອອກໄປຈາກ [ກ]ບາບີໂລນ. ພວກ
ເຈົ້າທີ່ຖືພາຊະນະຂອງພຣະຜູ້ເປັນເຈົ້າຈົ່ງ
ຮັກສາຕົວໃຫ້ [ຂ]ສະອາດ.
6 ຈົ່ງເອີ້ນໃຫ້ມີການຊຸມນຸມ, ແລະ [ກ]ກ່າວ
ນໍາກັນເລື້ອຍໆ. ແລະ ໃຫ້ທຸກໆຄົນເອີ້ນຫາ
ພຣະນາມຂອງພຣະຜູ້ເປັນເຈົ້າ.
7 ແທ້ຈິງແລ້ວ, ຕາມຄວາມຈິງແລ້ວ ເຮົາ
ກ່າວກັບພວກເຈົ້າອີກ, ເວລາໄດ້ມາເຖິງ
ແລ້ວ ເມື່ອສຸລະສຽງຂອງພຣະຜູ້ເປັນເຈົ້າ
ມາເຖິງພວກເຈົ້າ: ຈົ່ງອອກໄປຈາກບາບີ
ໂລນ; [ກ]ເຕົ້າໂຮມກັນຈາກບັນດາປະຊາ
ຊາດ, ຈາກ [ຂ]ສີ່ທິດ, ຈາກຂອບຟ້າສົ້ນໜຶ່ງ
ເຖິງອີກສົ້ນໜຶ່ງ.
8 ຈົ່ງ [ກ]ສົ່ງພວກແອວເດີຂອງສາດສະໜາ
ຈັກຂອງເຮົາໄປຍັງປະຊາຊາດທັງຫລາຍຊຶ່ງ
ຢູ່ໃນແດນໄກ; ໄປຍັງ [ຂ]ໝູ່ເກາະໃນທະເລ;
ຈົ່ງສົ່ງອອກໄປຍັງແຜ່ນດິນຕ່າງແດນ; ຈົ່ງ
ເອີ້ນຫາປະຊາຊາດທັງປວງ, ທໍາອິດຫາ
[ຄ]ຄົນຕ່າງຊາດ, ແລະ ຈາກນັ້ນຫາ [ງ]ຊາວຢິວ.
9 ແລະ ຈົ່ງເບິ່ງ, ແລະ ເບິ່ງແມ, ນີ້ຈະເປັນ
ການເອີ້ນຂອງພວກເຂົາ, ແລະ ສຸລະສຽງ
ຂອງພຣະຜູ້ເປັນເຈົ້າເຖິງຜູ້ຄົນທັງປວງ:
ຈົ່ງອອກໄປຍັງແຜ່ນດິນຊີໂອນ, ເພື່ອວ່າ
ເຂດແດນຂອງຜູ້ຄົນຂອງເຮົາຈະຂະຫຍາຍ
ອອກໄປ, ແລະ ເພື່ອວ່າ [ກ]ສະເຕກຂອງນາງ
ຈະເຂັ້ມແຂງຂຶ້ນ, ແລະ ເພື່ອວ່າ [ຂ]ຊີໂອນຈະ
ອອກໄປເຖິງພາກພື້ນຕ່າງໆທີ່ອ້ອມຮອບ.
10 ແທ້ຈິງແລ້ວ, ໃຫ້ສຽງຮ້ອງອອກໄປ
ໃນບັນດາຜູ້ຄົນ: ຈົ່ງຕື່ນ ແລະ ລຸກຂຶ້ນ ແລະ
ອອກໄປພົບເຈົ້າບ່າວ; ຈົ່ງເບິ່ງ ແລະ ເບິ່ງ
ເຖີດ, [ກ]ເຈົ້າບ່າວພວມມາ; ຈົ່ງອອກໄປພົບ
ພຣະອົງ. ຈົ່ງຕຽມຕົນເອງສໍາລັບ [ຂ]ວັນອັນ
ຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ.
11 ສະນັ້ນ, ຈົ່ງ [ກ]ຄອຍເຝົ້າຢູ່, ເພາະພວກ
ເຈົ້າບໍ່ [ຂ]ຮູ້ຈັກວ່າວັນໃດ ຫລື ຊົ່ວໂມງໃດ.
12 ສະນັ້ນ, ໃຫ້ພວກເຂົາຜູ້ຢູ່ [ກ]ໃນບັນດາ
ຄົນຕ່າງຊາດຫລົບໜີໄປຍັງ [ຂ]ຊີໂອນ.
13 ແລະ ໃຫ້ພວກເຂົາຜູ້ເປັນຂອງ [ກ]ຢູດາ
ຫລົບໜີໄປຍັງ [ຂ]ເຢຣູຊາເລັມ, ໄປຍັງ [ຄ]ພູ
ຂອງ [ງ]ບ້ານຂອງພຣະຜູ້ເປັນເຈົ້າ.

---

3 ຂ ອຊຢ 12:2; 52:10. ຄນພ ແຜນແຫ່ງການໄຖ່; ລອດ, ຄວາມລອດ.
5 ກ ແອວ 5:57; ຄພ 1:16. ຄນພ ຄວາມເປັນຢູ່ທາງໂລກ; ບາເບນ, ບາບີໂລນ.
ຂ 2 ຕມທ 2:21; 3 ນຟ 20:41; ຄພ 38:42. ຄນພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
6 ກ ມລກ 3:16–18.
7 ກ ຄພ 29:8. ຄນພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
ຂ ຊກຢ 2:6–7; ມຣກ 13:27.
8 ກ ຄນພ ວຽກງານເຜີຍແຜ່.
ຂ ອຊຢ 11:11; 1 ນຟ 22:4; 2 ນຟ 10:8, 20.
ຄ ຄນພ ຄົນຕ່າງຊາດ.
ງ ຄນພ ຊາວຢິວ.
9 ກ ອຊຢ 54:2. ຄນພ ສະເຕກ.
ຂ ຄນພ ຊີໂອນ.
10 ກ ມທ 25:6; ຄພ 33:17–18; 45:54–59. ຄນພ ເຈົ້າບ່າວ.
ຂ ຄພ 1:12–14.
11 ກ ມຣກ 13:32–37; ຈສ—ມ 1:46, 48.
ຂ ຄພ 49:7.
12 ກ ຄພ 38:31, 42.
ຂ ຄນພ ຊີໂອນ.
13 ກ ຄນພ ຢູດາ (ລູກຊາຍຂອງຢາໂຄບ).
ຂ ຄນພ ເຢຣູຊາເລັມ.
ຄ ອຊຢ 2:1–3; ອຊກ 38:8.
ງ ພສສ 122.

14 ຈົ່ງອອກໄປຈາກບັນດາປະຊາຊາດ, ແມ່ນ ແຕ່ ຈາກບາບີໂລນ, ຈາກບັນດາ ຄວາມຊົ່ວຮ້າຍ, ຊຶ່ງເປັນບາບີໂລນທາງວິນ ຍານ.

15 ແຕ່ຕາມຄວາມຈິງ, ພຣະຜູ້ເປັນເຈົ້າ ໄດ້ກ່າວດັ່ງນີ້, ຢ່າໃຫ້ການໜີໄປຂອງພວກ ເຈົ້າເປັນໄປແບບ [ກ]ຟ້າວຟັ່ງ, ແຕ່ໃຫ້ທຸກສິ່ງ ທັງປວງຖືກຈັດຕຽມໄວ້ກ່ອນໜ້າພວກເຈົ້າ; ແລະ ຄົນທີ່ອອກໄປ, [ຂ]ຢ່າໃຫ້ເຂົາຫລຽວ ຫລັງກັບຄືນມາເບິ່ງ ຖ້າບໍ່ດັ່ງນັ້ນຄວາມ ພິນາດຈະເກີດກັບເຂົາຢ່າງທັນທີ.

16 ຈົ່ງເຊື່ອຟັງ ແລະ ຟັງເຖີດ, ໂອ້ ເຈົ້າຜູ້ ອາໄສຂອງແຜ່ນດິນໂລກ. ຈົ່ງ [ກ]ຟັງ, ພວກ ເຈົ້າແອວເດີຂອງສາດສະໜາຈັກຂອງເຮົາ, ແລະ ໄດ້ຍິນສຸລະສຽງຂອງພຣະຜູ້ເປັນ ເຈົ້າ; ເພາະວ່າພຣະອົງໄດ້ເອີ້ນຫາມະນຸດ ທັງປວງ, ແລະ ພຣະອົງໄດ້ບັນຊາມະນຸດ ທັງປວງໃນທຸກແຫ່ງຫົນໃຫ້ [ຂ]ກັບໃຈ.

17 ເພາະຈົ່ງເບິ່ງ, ອົງພຣະຜູ້ເປັນເຈົ້າໄດ້ [ກ]ສົ່ງທູດອອກໄປປ່າວຮ້ອງຜ່ານທ່າມກາງ ຟ້າສະຫວັນ, ກ່າວວ່າ: ຈົ່ງຕຽມທາງຂອງ ພຣະຜູ້ເປັນເຈົ້າ, ແລະ ເຮັດທາງຂອງພຣະ ອົງໃຫ້ [ຂ]ຊື່, ເພາະວ່າຊົ່ວໂມງຂອງ [ຄ]ການ ສະເດັດມາຂອງພຣະອົງໃກ້ຈະມາເຖິງ ແລ້ວ—

18 ເມື່ອ [ກ]ພຣະເມສານ້ອຍຈະປະທັບຢືນ ຢູ່ເທິງ [ຂ]ພູຊີໂອນ, ແລະ ຢູ່ກັບພຣະອົງຈະ ມີ [ຄ]ໜຶ່ງແສນສີ່ໝື່ນສີ່ພັນຄົນ, ໂດຍມີພຣະ ນາມຂອງພຣະບິດາຂອງພຣະອົງຂຽນໄວ້ຢູ່ ເທິງໜ້າຜາກຂອງພວກເຂົາ.

19 ດັ່ງນັ້ນ, ຈົ່ງຕຽມພ້ອມສຳລັບ [ກ]ການ ສະເດັດມາຂອງ [ຂ]ເຈົ້າບ່າວ; ພວກເຈົ້າຈົ່ງ ໄປ, ພວກເຈົ້າຈົ່ງອອກໄປພົບພຣະອົງ.

20 ເພາະຈົ່ງເບິ່ງ, ພຣະອົງຈະປະທັບ [ກ]ຢືນຢູ່ເທິງພູໝາກກອກເທດ, ແລະ ເທິງ ມະຫາສະໝຸດອັນກວ້າງໃຫຍ່ໄພສານ, ແມ່ນແຕ່ເລິກອັນໃຫຍ່ຫລວງ, ແລະ ເທິງ ໝູ່ເກາະໃນທະເລ, ແລະ ເທິງແຜ່ນດິນ ຊີໂອນ.

21 ແລະ ພຣະອົງຈະ [ກ]ເປັ່ງສຸລະສຽງ ຂອງພຣະອົງຈາກ [ຂ]ຊີໂອນ, ແລະ ພຣະອົງ ຈະກ່າວຈາກເຢຣູຊາເລັມ, ແລະ ສຸລະສຽງ ຂອງພຣະອົງຈະໄດ້ຍິນໃນທ່າມກາງທຸກຜູ້ ຄົນທັງປວງ;

22 ແລະ ສຽງນັ້ນຈະເປັນດັ່ງ [ກ]ສຽງຂອງ ແມ່ນ້ຳຫລວງຫລາຍ, ແລະ ຈະເປັນດັ່ງສຽງ [ຂ]ຟ້າຮ້ອງ, ຊຶ່ງຈະ [ຄ]ພັງພູລົງມາ, ແລະ ຮ່ອມ ພູຈະບໍ່ຖືກພົບເຫັນ.

23 ພຣະອົງຈະບັນຊາຄວາມເລິກອັນ ໃຫຍ່ຫລວງ, ແລະ ມັນຈະຖືກໄລ່ກັບໄປ ຍັງດິນແດນທາງເໜືອ, ແລະ [ກ]ໝູ່ເກາະຈະ ກາຍເປັນແຜ່ນດິນດຽວ;

24 ແລະ ແຜ່ນດິນ [ກ]ເຢຣູຊາເລັມ ແລະ ແຜ່ນດິນຊີໂອນ ຈະກັບຄືນສູ່ສະຖານທີ່

---

15 *ກ* ອຊຍ 52:10–12; ຄພ 58:56.
*ຂ* ປຖກ 19:17, 26; ລກ 9:62.
16 *ກ* ຄພ 1:1–6.
*ຂ* ຄມພ ກັບໃຈ, ການກັບໃຈ.
17 *ກ* ຄພ 13; 27:7–8; 88:92.
*ຂ* ອຊຍ 40:3–5.
*ຄ* ມລກ 3:1.
18 *ກ* ພນມ 14:1. ຄມພ ພຣະເມສານ້ອຍ ຂອງພຣະເຈົ້າ.
*ຂ* ຄພ 84:2.
*ຄ* ພນມ 7:1–4.
19 *ກ* ມທ 25:1–13; ຄພ 33:17–18; 88:92. ຄມພ ການສະເດັດມາຄັ້ງທີ ສອງຂອງພຣະເຢຊູຄຣິດ.
*ຂ* ຄມພ ເຈົ້າບ່າວ.
20 *ກ* ຊກຢ 14:4; ຄພ 45:48–53.
21 *ກ* ຢອ 3:16; ອມ 1:2.
*ຂ* ອຊຍ 2:2–4.
22 *ກ* ອຊກ 43:2; ພນມ 1:15; ຄພ 110:3.
*ຂ* ພສສ 77:18; ພນມ 14:2.
*ຄ* ຜປ 5:5; ອຊຍ 40:4; 64:1; ພນມ 16:20; ຄພ 49:23; 109:74.
23 *ກ* ພນມ 6:14.
24 *ກ* ຄມພ ເຢຣູຊາເລັມ.

ຂອງມັນເອງ, ແຜ່ນດິນໂລກຈະເປັນເໝືອນ
ດັ່ງທີ່ມັນເຄີຍເປັນໃນວັນເວລາກ່ອນທີ່ມັນ
ໄດ້ [ຂ]ແຍກອອກຈາກກັນ.
25 ແລະ ພຣະຜູ້ເປັນເຈົ້າ, ແມ່ນແຕ່ພຣະ
ຜູ້ຊ່ວຍໃຫ້ລອດ, ຈະປະທັບຢືນຢູ່ໃນທ່າມ
ກາງຜູ້ຄົນຂອງພຣະອົງ, ແລະ ຈະ [ກ]ປົກ
ຄອງເໜືອເນື້ອໜັງທັງປວງ.
26 ແລະ ພວກເຂົາທີ່ຢູ່ໃນດິນແດນ
[ກ]ທາງເໜືອຈະມາຢູ່ໃນຄວາມຊົງຈຳຕໍ່ພຣະ
ພັກຂອງພຣະຜູ້ເປັນເຈົ້າ; ແລະ ສາດສະ
ດາຂອງພວກເຂົາຈະໄດ້ຍິນສຸລະສຽງຂອງ
ພຣະອົງ, ແລະ ຈະບໍ່ຢັບຢັ້ງຕົນເອງອີກຕໍ່
ໄປ; ແລະ ພວກເຂົາຈະຕີກ້ອນຫີນ, ແລະ
ນ້ຳກ້ອນຈະໄຫລລົງມາຢູ່ຕໍ່ໜ້າພວກເຂົາ.
27 ແລະ [ກ]ທາງຫລວງຈະຖືກສ້າງຂຶ້ນໃນ
ທ່າມກາງຄວາມເລິກອັນໃຫຍ່ຫລວງ.
28 ສັດຕູຂອງພວກເຂົາຈະກາຍເປັນ
ເຫຍື່ອໃຫ້ພວກເຂົາ,
29 ແລະ ໃນທະເລຊາຍທີ່ [ກ]ແຫ້ງແລ້ງ
ຈະບັງເກີດບໍ່ນ້ຳທີ່ປະກອບດ້ວຍຊີວິດ;
ແລະ ພື້ນດິນທີ່ແຫ້ງແລ້ງຈະບໍ່ເປັນແຜ່ນ
ດິນທີ່ກະຫາຍນ້ຳອີກຕໍ່ໄປ.
30 ແລະ ພວກເຂົາຈະນຳຊັບສົມບັດອັນ
ລ້ຳຄ່າຂອງພວກເຂົາມາໃຫ້ລູກຫລານຂອງ
[ກ]ເອຟະຣາອິມ, ຜູ້ຮັບໃຊ້ຂອງເຮົາ.
31 ແລະ ເຂດແດນຂອງ [ກ]ເນີນພູອັນເປັນ
ນິດຈະສັ່ນສະເທືອນຢູ່ຕໍ່ໜ້າພວກເຂົາ.
32 ແລະ ຢູ່ທີ່ນັ້ນພວກເຂົາຈະກົ້ມຂາບ
ລົງ ແລະ ຖືກສວມມົງກຸດດ້ວຍລັດສະໝີ
ພາບ, ແມ່ນແຕ່ໃນຊີໂອນ, ໂດຍມືຂອງຜູ້
ຮັບໃຊ້ຂອງພຣະຜູ້ເປັນເຈົ້າ, ແມ່ນແຕ່ລູກ
ຫລານຂອງເອຟະຣາອິມ.
33 ແລະ ພວກເຂົາຈະເຕັມໄປດ້ວຍ
[ກ]ເພງແຫ່ງຄວາມສຸກອັນເປັນນິດ.
34 ຈົ່ງເບິ່ງ, ນີ້ແມ່ນພອນຂອງພຣະເຈົ້າ
ຜູ້ເປັນນິດແກ່ [ກ]ບັນດາເຜົ່າຂອງອິດສະ
ຣາເອນ, ແລະ ພອນທີ່ເລີດກວ່າໄວ້ເທິງຫົວ
ຂອງ [ຂ]ເອຟະຣາອິມ ແລະ ເພື່ອນມິດສະ
ຫາຍຂອງລາວ.
35 ແລະ ພວກເຂົາກໍເປັນຂອງເຜົ່າ [ກ]ຢູ
ດາຄືກັນ, ຫລັງຈາກຄວາມເຈັບປວດຂອງ
ພວກເຂົາ, ຈະໄດ້ຮັບການຊຳລະໃຫ້ [ຂ]ບໍ
ລິສຸດຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ,
ເພື່ອອາໄສຢູ່ໃນທີ່ປະທັບຂອງພຣະອົງທຸກ
ວັນ ແລະ ທຸກຄືນ, ຕະຫລອດການ ແລະ
ຕະຫລອດໄປ.
36 ແລະ ບັດນີ້, ຕາມຄວາມຈິງແລ້ວ
ພຣະຜູ້ເປັນເຈົ້າໄດ້ກ່າວວ່າ ສິ່ງເຫລົ່ານີ້
ຈະໄດ້ເປັນທີ່ຮູ້ຈັກໃນບັນດາ ພວກເຈົ້າ,
ໂອ້ ຜູ້ອາໄສຂອງແຜ່ນດິນໂລກ, ເຮົາໄດ້
ສົ່ງ [ກ]ທູດຂອງເຮົາເຫາະຜ່ານທ່າມກາງຟ້າ
ສະຫວັນ, ໂດຍມີ [ຂ]ພຣະກິດຕິຄຸນອັນເປັນ
ນິດ, ຜູ້ໄດ້ປະກົດຕໍ່ບາງຄົນ ແລະ ໄດ້ມອບ
ໝາຍມັນໃຫ້ແກ່ມະນຸດ, ຜູ້ຈະປະກົດຕໍ່

24 *ຂ* ປຖກ 10:25.
ຄມພ ແຜ່ນດິນໂລກ—
ການແບ່ງແຍກຂອງ
ແຜ່ນດິນໂລກ.
25 *ກ* ຄມພ ພຣະເຢຊູຄຣິດ—
ການປົກຄອງຂອງພຣະ
ຄຣິດໃນລະຫວ່າງພັນປີ.
26 *ກ* ຢມຢ 16:14–15;
ຄພ 110:11.
ຄມພ ອິດສະຣາເອນ—
ສິບເຜົ່າທີ່ຫາຍໄປຂອງ
ອິດສະຣາເອນ.
27 *ກ* ອຊຢ 11:15–16;
2 ນຟ 21:16.
29 *ກ* ອຊຢ 35:6–7.
30 *ກ* ຊກຢ 10:7–12.
ຄມພ ເອຟະຣາອິມ—
ເຜົ່າຂອງເອຟະຣາອິມ.
31 *ກ* ປຖກ 49:26.
33 *ກ* ອຊຢ 35:10; 51:11;
ຄພ 66:11.
34 *ກ* ຄມພ ອິດສະຣາເອນ—
ສິບສອງເຜົ່າຂອງ
ອິດສະຣາເອນ.
*ຂ* ປຖກ 48:14–20;
1 ຂຄ 5:1–2;
ອທ 13:7–10.
35 *ກ* ຄມພ ຢູດາ (ລູກຊາຍຂອງ
ຢາໂຄບ)—ເຜົ່າຂອງຢູດາ.
*ຂ* ຄມພ ສັກສິດ,
ຄວາມສັກສິດ.
36 *ກ* ພນມ 14:6–7;
ຄພ 20:5–12.
*ຂ* ຄມພ ການຟື້ນຟູ
ພຣະກິດຕິຄຸນ.

ຫລາຍຄົນທີ່ອາໄສຢູ່ເທິງແຜ່ນດິນໂລກ.

37 ແລະ [ກ]ພຣະກິດຕິຄຸນນີ້ຈະຖືກ [ຂ]ສັ່ງສອນແກ່ [ຄ]ທຸກປະຊາຊາດ, ແລະ ທຸກຕະກຸນ, ແລະ ທຸກພາສາ, ແລະ ທຸກຜູ້ຄົນທັງປວງ.

38 ແລະ ຜູ້ຮັບໃຊ້ຂອງພຣະເຈົ້າຈະອອກໄປ, ກ່າວດ້ວຍສຽງດັງວ່າ: ຈົ່ງຢ້ານກົວພຣະເຈົ້າ ແລະ ມອບລັດສະໝີພາບແດ່ພຣະອົງ, ເພາະຊົ່ວໂມງຂອງການພິພາກສາຂອງພຣະອົງມາເຖິງແລ້ວ;

39 ແລະ ຈົ່ງ [ກ]ນະມັດສະການພຣະອົງທີ່ໄດ້ສ້າງສະຫວັນ, ແລະ ແຜ່ນດິນໂລກ, ແລະ ທະເລ, ແລະ ຕົ້ນນ້ຳລຳທານ—

40 ໂດຍເອີ້ນຫາພຣະນາມຂອງພຣະຜູ້ເປັນເຈົ້າທຸກວັນ ແລະ ທຸກຄືນ, ກ່າວວ່າ: ໂອ້ ຖ້າຫາກພຣະອົງຈະ [ກ]ແຍກຟ້າສະຫວັນ, ຖ້າຫາກພຣະອົງຈະລົງມາ, ຖ້າຫາກພູເຂົາຈະໄຫລລົງມາຢູ່ຕໍ່ໜ້າທີ່ປະທັບຢູ່ຂອງພຣະອົງ.

41 ແລະ ມັນຈະຕອບຢູ່ເທິງຫົວພວກເຂົາ; ເພາະວ່າທີ່ປະທັບຂອງພຣະຜູ້ເປັນເຈົ້າຈະເປັນຄືກັນກັບໄຟຫລໍ່ຫລອມທີ່ລຸກໄໝ້, ແລະ ເປັນໄຟທີ່ເຮັດໃຫ້ນ້ຳ [ກ]ຟົດ.

42 ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງຈະສະເດັດລົງມາເພື່ອເຮັດໃຫ້ພຣະນາມຂອງພຣະອົງເປັນທີ່ຮູ້ຈັກແກ່ຜູ້ປໍລະປັກຂອງພຣະອົງ, ແລະ ປະຊາຊາດທັງປວງຈະຕົວສັ່ນຢູ່ຕໍ່ໜ້າພຣະພັກຂອງພຣະອົງ—

43 ເມື່ອພຣະອົງເຮັດສິ່ງທີ່ໜ້າຢ້ານກົວ, ສິ່ງທີ່ພວກເຂົາບໍ່ຄາດຄິດ;

44 ແທ້ຈິງແລ້ວ, ເມື່ອພຣະອົງສະເດັດລົງມາ, ແລະ ພູເຂົາໄຫລລົງມາຢູ່ຕໍ່ໜ້າທີ່ປະທັບຢູ່ຂອງພຣະອົງ, ພຣະອົງຈະ [ກ]ພົບຄົນທີ່ປິຕິຍິນດີ ແລະ ເຮັດຄວາມຊອບທຳ, ຜູ້ທີ່ລະນຶກເຖິງພຣະອົງໃນວິທີທາງຂອງພຣະອົງ.

45 ເພາະວ່ານັບແຕ່ການເລີ່ມຕົ້ນຂອງໂລກເປັນຕົ້ນມາ ບໍ່ມີມະນຸດຄົນໃດໄດ້ຍິນຫລື ໄດ້ຮູ້ຈັກດ້ວຍຫູ, ທັງບໍ່ເຄີຍໄດ້ເຫັນດ້ວຍຕາ, ໂອ້ ພຣະອົງເຈົ້າ, ນອກຈາກພຣະອົງແລ້ວ, ພຣະອົງໄດ້ [ກ]ຕຽມສິ່ງຍິ່ງໃຫຍ່ພຽງໃດສຳລັບຜູ້ທີ່ [ຂ]ລໍຖ້າພຣະອົງ.

46 ແລະ ຈະກ່າວກັນວ່າ: ນີ້ [ກ]ແມ່ນໃຜຜູ້ທີ່ລົງ [ຂ]ມາຈາກພຣະເຈົ້າໃນສະຫວັນດ້ວຍອາພອນຍ້ອມສີ; ແທ້ຈິງແລ້ວ, ຈາກພາກພື້ນຊຶ່ງບໍ່ຮູ້ຈັກ, ຫຸ້ມຫໍ່ດ້ວຍອາພອນທີ່ສະຫງ່າລາສີ, ເດີນທາງໃນຄວາມຍິ່ງໃຫຍ່ແຫ່ງພະລັງຂອງພຣະອົງ?

47 ແລະ ພຣະອົງຈະກ່າວວ່າ: ເຮົາຄືຄົນທີ່ໄດ້ກ່າວແລ້ວໃນຄວາມຊອບທຳ, ຜູ້ຊົງລິດອຳນາດຍິ່ງໃຫຍ່ທີ່ຈະຊ່ວຍໃຫ້ລອດ.

48 ແລະ ພຣະຜູ້ເປັນເຈົ້າຈະແຕ່ງກາຍໃນ [ກ]ສີແດງ, ແລະ ອາພອນຂອງພຣະອົງຈະເໝືອນດັ່ງຂອງຜູ້ທີ່ຢຽບໝາກອະງຸ່ນ.

49 ແລະ ລັດສະໝີພາບແຫ່ງການປະທັບຢູ່ຂອງພຣະອົງຈະຍິ່ງໃຫຍ່ທີ່ສຸດຈົນເຖິງຂະໜາດ [ກ]ດວງຕາເວັນຈະເຊື່ອງໜ້າ

---

37 *ກ* ຄມພ ພຣະກິດຕິຄຸນ.
*ຂ* ຄມພ ສັ່ງສອນ; ວຽກງານເຜີຍແຜ່.
*ຄ* ຄພ 42:58.
39 *ກ* ຄມພ ນະມັດສະການ.
40 *ກ* ອຊຢ 64:1–2.
41 *ກ* ໂຢບ 41:31.
44 *ກ* 1 ທສນ 4:15–18.
45 *ກ* ອຊຢ 64:4; 1 ກຣທ 2:9.
*ຂ* ພຄຄ 3:25; 2 ນຟ 6:7, 13.
46 *ກ* ອຊຢ 63:1–2.
*ຂ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
48 *ກ* ປຖກ 49:11–12; ລກ 22:44; ພນມ 19:11–15; ປຈສ ພນມ 19:15 (ພາກທ້ອຍທ້າຍ); ມຊຢ 3:7; ຄພ 19:18.
49 *ກ* ອຊຢ 13:10; 24:23; ຄພ 45:42; 88:87.

ຂອງມັນດ້ວຍຄວາມອັບອາຍ, ແລະ ດວງ
ເດືອນຈະ ດັບ ແສງຂອງມັນ, ແລະ ດວງ
ດາວຈະຖືກຊັດອອກຈາກບ່ອນຂອງມັນ.
50 ແລະ ຈະໄດ້ຍິນສຸລະສຽງຂອງພຣະ
ອົງວ່າ: ເຮົາໄດ້ [ກ]ຢຽບເຄື່ອງປັ່ນໝາກ
ອະງຸ່ນຄົນດຽວ, ແລະ ໄດ້ນຳການພິພາກ
ສາມາໄວ້ເທິງຜູ້ຄົນທັງປວງ; ແລະ ບໍ່ມີຜູ້ໃດ
ຢູ່ກັບເຮົາ;
51 ແລະ ເຮົາໄດ້ຢຽບພວກເຂົາໃນຄວາມ
ໂມໂຫຮ້າຍຂອງເຮົາ, ແລະ ເຮົາໄດ້ຢຽບຢ່ຳ
ພວກເຂົາລົງໃນຄວາມພຣະພິໂລດຂອງ
ເຮົາ, ແລະ ເລືອດຂອງພວກເຂົານັ້ນ ເຮົາ
ໄດ້ [ກ]ຊິດໃສ່ອາພອນຂອງເຮົາ, ແລະ ເປິ
ເປື້ອນເຄື່ອງນຸ່ງຫົ່ມທັງໝົດຂອງເຮົາ; ເພາະ
ວ່ານີ້ຄືວັນແຫ່ງການແກ້ແຄ້ນຊຶ່ງຢູ່ໃນໃຈ
ຂອງເຮົາ.
52 ແລະ ບັດນີ້ ປີແຫ່ງຜູ້ໄດ້ຮັບການໄຖ່
ຂອງເຮົາມາເຖິງແລ້ວ; ແລະ ພວກເຂົາ
ຈະກ່າວເຖິງຄວາມກະລຸນາຮັກຫອມຂອງ
ພຣະຜູ້ເປັນເຈົ້າຂອງພວກເຂົາ, ແລະ ທຸກ
ສິ່ງທີ່ພຣະອົງໄດ້ມອບໃຫ້ພວກເຂົາຕາມ
ພຣະກະລຸນາທິຄຸນຂອງພຣະອົງ, ແລະ
ຕາມຄວາມກະລຸນາຮັກຫອມຂອງພຣະອົງ,
ຕະຫລອດການ ແລະ ຕະຫລອດໄປ.
53 ໃນ [ກ]ຄວາມທຸກທໍລະມານທັງປວງ
ຂອງພວກເຂົາ ພຣະອົງໄດ້ເປັນທຸກ. ແລະ
ທູດຈາກທີ່ປະທັບຂອງພຣະອົງໄດ້ຊ່ວຍ
ພວກເຂົາ; ແລະ ໃນ [ຂ]ຄວາມຮັກຂອງພຣະ
ອົງ, ແລະ ໃນຄວາມສົງສານຂອງພຣະອົງ,
ພຣະອົງໄດ້ [ຄ]ໄຖ່ພວກເຂົາ, ແລະ ໄດ້ແບກ
ພວກເຂົາ, ແລະ ອູ້ມພວກເຂົາຕະຫລອດ
ທຸກຍຸກທຸກສະໄໝເກົ່າກ່ອນ;
54 ແທ້ຈິງແລ້ວ, ແລະ [ກ]ເອນົກນຳອີກ,
ແລະ ຄົນທີ່ຢູ່ກັບລາວ; ສາດສະດາຜູ້ມີຊີ
ວິດກ່ອນລາວ; ແລະ [ຂ]ໂນອານຳອີກ, ແລະ
ຜູ້ທີ່ມີຊີວິດກ່ອນລາວ; ແລະ [ຄ]ໂມເຊນຳອີກ,
ແລະ ຜູ້ທີ່ມີຊີວິດກ່ອນລາວ;
55 ແລະ ຈາກໂມເຊເຖິງເອລີຢາ, ແລະ
ຈາກເອລີຢາເຖິງໂຢຮັນ, ຜູ້ໄດ້ຢູ່ກັບພຣະ
ຄຣິດໃນ [ກ]ການຟື້ນຄືນພຣະຊົນຂອງພຣະ
ອົງ, ແລະ ອັກຄະສາວົກຜູ້ບໍລິສຸດ, ພ້ອມ
ກັບອັບຣາຮາມ, ອີຊາກ, ແລະ ຢາໂຄບ,
ຈະຢູ່ໃນທີ່ປະທັບຂອງພຣະເມສານ້ອຍ.
56 ແລະ [ກ]ຫລຸມສົບຂອງ [ຂ]ໄພ່ພົນຂອງ
ພຣະເຈົ້າຈະຖືກ [ຄ]ເປີດອອກ; ແລະ ພວກ
ເຂົາຈະອອກມາ ແລະ ຢືນຢູ່ທາງ [ງ]ເບື້ອງ
ຂວາພຣະຫັດຂອງພຣະເມສານ້ອຍ, ເມື່ອ
ພຣະອົງຈະປະທັບຢືນຢູ່ເທິງ [ຈ]ພູຊີໂອນ,
ແລະ ເທິງນະຄອນສັກສິດ, [ສ]ເຢຣູຊາເລັມ
ໃໝ່; ແລະ ພວກເຂົາຈະຮ້ອງ [ຊ]ເພງສັນລະ
ເສີນ [ຍ]ພຣະເມສານ້ອຍ, ທັງວັນ ແລະ ຄືນ
ຕະຫລອດການ ແລະ ຕະຫລອດໄປ.
57 ແລະ ເພາະດ້ວຍເຫດນີ້, ເພື່ອວ່າ
ມະນຸດຈະຖືກເຮັດໃຫ້ເປັນຜູ້ຮັບ [ກ]ລັດສະ
ໝີພາບຊຶ່ງຈະຖືກເປີດເຜີຍ, ພຣະຜູ້ເປັນ
ເຈົ້າໄດ້ສົ່ງຄວາມສົມບູນແຫ່ງ [ຂ]ພຣະກິດຕິ
ຄຸນຂອງພຣະອົງອອກໄປ, ພັນທະສັນຍາ
ອັນເປັນນິດຂອງພຣະອົງ, ໂດຍໃຫ້ເຫດ

50 *ກ* ອຊຢ 63:2–3;
ຄພ 76:107; 88:106.
51 *ກ* ລລວ 8:30.
53 *ກ* ອຊຢ 63:4–9.
*ຂ* ຄນມພ ໃຈບຸນ, ຄວາມໃຈບຸນ.
*ຄ* ຄນມພ ໄຖ່, ການໄຖ່, ຖືກໄຖ່.
54 *ກ* ຄນມພ ເອນົກ.
*ຂ* ຄນມພ ໂນອາ, ປິຕຸໃນ
ພຣະຄຣິສຕະທຳຄຳພີ.
*ຄ* ຄນມພ ໂມເຊ.
55 *ກ* ຄນມພ ການຟື້ນຄືນພຣະ
ຊົນ, ການຟື້ນຄືນຊີວິດ.
56 *ກ* ຄພ 29:13.
*ຂ* ຄນມພ ໄພ່ພົນຂອງພຣະເຈົ້າ.
*ຄ* ຄພ 45:45–46; 88:96–97.
*ງ* ມທ 25:33–34.
*ຈ* ອຊຢ 24:23;
ພນມ 14:1;
ຄພ 76:66; 84:2, 98–102.
*ສ* ຄນມພ ເຢຣູຊາເລັມໃໝ່.
*ຊ* ພນມ 15:3;
ຄພ 84:98–102.
*ຍ* ຄນມພ ພຣະເມສານ້ອຍ
ຂອງພຣະເຈົ້າ.
57 *ກ* ຄນມພ ລະດັບຂອງ
ລັດສະໝີພາບ.
*ຂ* ຄນມພ ພຣະກິດຕິຄຸນ.

ຜົນໃນຄວາມແຈ່ມແຈ້ງ ແລະ ລຽບງ່າຍ—
58 ເພື່ອຕຽມຄົນອ່ອນແອໄວ້ສຳລັບສິ່ງທີ່
ຈະມາເທິງແຜ່ນດິນໂລກ, ແລະ ເພື່ອແລ່ນ
ວຽກຂອງພຣະຜູ້ເປັນເຈົ້າໃນວັນທີ່ [ກ]ຄົນ
ອ່ອນແອຈະເຮັດໃຫ້ຄົນສະຫລາດຈຳນົນ,
ແລະ [ຂ]ຄົນເລັກໜ້ອຍກາຍເປັນປະຊາຊາດ
ທີ່ເຂັ້ມແຂງ, ແລະ ຄົນ [ຄ]ສອງຄົນຈະເຮັດ
ໃຫ້ຫລາຍໝື່ນຄົນປົບໜີໄປ.
59 ແລະ ໂດຍສິ່ງທີ່ອ່ອນແອຂອງແຜ່ນ
ດິນໂລກ ພຣະຜູ້ເປັນເຈົ້າຈະ [ກ]ຟັດປະຊາ
ຊາດໂດຍອຳນາດຂອງພຣະວິນຍານ.
60 ແລະ ເພາະເຫດນີ້ ບັນຍັດເຫລົ່ານີ້ຈຶ່ງ
ໄດ້ຖືກມອບໃຫ້; ມັນຖືກບັນຊາໃຫ້ຮັກສາ
ໄວ້ຈາກໂລກໃນວັນທີ່ມັນຖືກມອບໃຫ້, ແຕ່
ບັດນີ້ຈະ [ກ]ອອກໄປສູ່ເນື້ອໜັງ [ຂ]ທັງປວງ—
61 ແລະ ນີ້ຕາມພຣະດຳລັດ ແລະ ພຣະ
ປະສົງຂອງພຣະຜູ້ເປັນເຈົ້າ, ຜູ້ປົກຄອງ
ເໜືອເນື້ອໜັງທັງປວງ.
62 ແລະ ກັບຄົນທີ່ [ກ]ກັບໃຈ ແລະ [ຂ]ຊຳລະ
ຕົນໃຫ້ບໍລິສຸດຢູ່ຕໍ່ພຣະພັກຂອງພຣະຜູ້
ເປັນເຈົ້າ ຈະໄດ້ຮັບ [ຄ]ຊີວິດນິລັນດອນ.
63 ແລະ ກັບຄົນທີ່ [ກ]ບໍ່ໄດ້ເຊື່ອຟັງສຸລະ
ສຽງຂອງພຣະຜູ້ເປັນເຈົ້າ ຈະສຳເລັດຜົນ
ຕາມສິ່ງທີ່ຖືກຂຽນໄວ້ໂດຍສາດສະດາ
ໂມເຊ, ວ່າພວກເຂົາຈະຖືກ [ຂ]ຕັດອອກຈາກ
ບັນດາຜູ້ຄົນ.
64 ແລະ ສິ່ງທີ່ໄດ້ຖືກຂຽນໄວ້ໂດຍສາດ
ສະດາ [ກ]ມາລາກີນຳອີກ: ເພາະ, ຈົ່ງເບິ່ງ,
[ຂ]ວັນນັ້ນຍ່ອມມາເຖິງ ຊຶ່ງຈະ [ຄ]ເຜົາໃໝ້ດັ່ງ
ເຕົາອົບ, ແລະ ຄົນທັງໝົດທີ່ອວດດີ, ແທ້
ຈິງແລ້ວ, ແລະ ຄົນທັງໝົດທີ່ເຮັດຄວາມ
ຊົ່ວຮ້າຍ ຈະເປັນຄືກັນກັບເຟືອງເຂົ້າ; ແລະ
ວັນນັ້ນຈະມາເຖິງເມື່ອໄຟຈະເຜົາພວກ
ເຂົາ, ຈອມໂຍທາໄດ້ກ່າວ, ຈົນບໍ່ມີທັງຮາກ
ຫລື ກິ່ງງ່າເຫລືອຢູ່.
65 ດັ່ງນັ້ນ, ນີ້ຈະເປັນຄຳຕອບຂອງພຣະ
ຜູ້ເປັນເຈົ້າແກ່ພວກເຂົາ:
66 ໃນ ມື້ນັ້ນ ເມື່ອເຮົາໄດ້ມາຫາຜູ້ຄົນ
ຂອງເຮົາ, ບໍ່ມີໃຜໃນບັນດາພວກເຈົ້າ [ກ]ຮັບ
ເຮົາ, ແລະ ພວກເຈົ້າຖືກໄລ່ອອກໄປ.
67 ເມື່ອເຮົາເອີ້ນອີກ ແຕ່ບໍ່ມີໃຜໃນພວກ
ເຈົ້າຕອບ; ແຕ່ [ກ]ແຂນຂອງເຮົາບໍ່ໄດ້ສັ້ນລົງ
ຈົນວ່າເຮົາບໍ່ສາມາດໄຖ່, ຫລື [ຂ]ອຳນາດ
ຂອງເຮົາບໍ່ສາມາດປົດປ່ອຍ.
68 ຈົ່ງເບິ່ງ, ໂດຍການຕິຕຽນຂອງເຮົາ,
ເຮົາເຮັດໃຫ້ນ້ຳທະເລ [ກ]ແຫ້ງລົງ. ເຮົາເຮັດ
ໃຫ້ແມ່ນ້ຳເປັນຖິ່ນແຫ້ງແລ້ງກັນດານ; ປາ
ຂອງພວກເຂົາສົ່ງກິ່ນເໝັນ, ແລະ ຕາຍໄປ
ເພາະຂາດນ້ຳ.
69 ເຮົາຫຸ້ມສະຫວັນໄວ້ດ້ວຍຄວາມມືດ,
ແລະ ເອົາຜ້າກະສອບມາຄຸມໄວ້.
70 ແລະ ພວກເຈົ້າຈະໄດ້ຮັບ [ກ]ຢ່າງນີ້
ຈາກມືຂອງເຮົາ—ພວກເຈົ້າຈະຕ້ອງນອນ
ລົງໃນຄວາມເສົ້າສະຫລົດໃຈ.

---

58 ກ ມທ 11:25; 1 ກຣທ 1:27; ແອວ 32:23; 37:6–7.
ຂ ອຊຢ 60:22.
ຄ ພບຍ 32:29–30.
59 ກ ມກ 4:11–13.
60 ກ ຄພ 104:58–59.
ຂ ຄພ 1:2.
62 ກ ຄມພ ກັບໃຈ, ການກັບໃຈ.
ຂ ຄພ 88:74. ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
ຄ ຄມພ ຊີວິດນິລັນດອນ.
63 ກ ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
ຂ ກຈກ 3:22–23; 1 ນຟ 22:20–21; 3 ນຟ 20:23; 21:11; ຄພ 1:14; ຈສ—ປ 1:40.
64 ກ ມລກ 4:1. ຄມພ ມາລາກີ.
ຂ ຈສ—ປ 1:36–37.
ຄ ອຊຢ 66:15–16; 1 ນຟ 22:15; 3 ນຟ 25:1; ຄພ 29:9; 64:24. ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
66 ກ ຢຮ 1:11.
67 ກ 2 ນຟ 28:32.
ຂ ອຊຢ 50:2; 2 ນຟ 7:2.
68 ກ ອພຍ 14:21; ຢຊ 3:14–17.
70 ກ ອຊຢ 50:11.

71 ຈົ່ງ ເບິ່ງ, ແລະ ເບິ່ງແມ, ບໍ່ມີໃຜຈະ
ປົດປ່ອຍພວກເຈົ້າ; ເພາະວ່າພວກເຈົ້າບໍ່
ເຊື່ອຟັງສຽງຂອງເຮົາ ເມື່ອເຮົາເອີ້ນພວກ
ເຈົ້າຈາກສະຫວັນ; ພວກເຈົ້າບໍ່ເຊື່ອຜູ້ຮັບ
ໃຊ້ຂອງເຮົາ, ແລະ ເມື່ອພວກເຂົາຖືກ [ກ]ສົ່ງ
ມາຫາພວກເຈົ້າ, ພວກເຈົ້າບໍ່ຮັບເອົາພວກ
ເຂົາ.
72 ດັ່ງນັ້ນ, ພວກ ເຂົາ ຈຶ່ງ ໄດ້ [ກ]ຜະ ນຶກ
ປະຈັກພະຍານ ແລະ ຜູກມັດກົດໄວ້, ແລະ
ພວກເຈົ້າໄດ້ຖືກສົ່ງໄປສູ່ຄວາມມືດ.
73 ຄົນເຫລົ່ານັ້ນຈະອອກໄປສູ່ຄວາມມືດ
ພາຍນອກ, ບ່ອນທີ່ມີການ [ກ]ຮ້ອງໄຫ້, ແລະ
ການຄວນຄາງ, ແລະ ການຂົບແຂ້ວຄັ້ງວ
ຟັນ.
74 ຈົ່ງເບິ່ງ ພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າໄດ້ກ່າວມັນໄວ້. ອາແມນ.

---

# ພາກທີ 134

*ການປະກາດເຖິງຄວາມເຊື່ອກ່ຽວກັບການປົກຄອງ ແລະ ກົດໝາຍທົ່ວໄປ, ໂດຍທີ່ຍອມຮັບກັນດ້ວຍສຽງເປັນເອກະສັນຢູ່ໃນການຊຸມນຸມໃຫຍ່ຂອງສາດສະໜາຈັກ ຊຶ່ງຖືກຈັດຂຶ້ນທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 17 ເດືອນສິງຫາ, 1835. ໄພ່ພົນຂອງພຣະເຈົ້າຫລາຍຄົນ ໄດ້ມາເຕົ້າໂຮມກັນເພື່ອພິຈາລະນາເນື້ອເລື່ອງທີ່ສະເໜີສຳລັບການພິມຄຳສອນ ແລະ ພັນທະສັນຍາຊຸດທຳອິດ. ໃນເວລານັ້ນ, ການປະກາດນີ້ໄດ້ຖືກມອບໃຫ້ເປັນບົດຄວາມເບື້ອງຕົ້ນດັ່ງຕໍ່ໄປນີ້: "ເພື່ອວ່າຄວາມເຊື່ອຂອງພວກເຂົາກ່ຽວກັບການປົກຄອງ ແລະ ກົດໝາຍທົ່ວໄປຝ່າຍໂລກຈະບໍ່ຖືກຕີຄວາມໝາຍຜິດ ຫລື ເຂົ້າໃຈຜິດ, ພວກເຮົາຄິດວ່າເໝາະສົມແລ້ວທີ່ຈະສະເໜີຄວາມຄິດຄວາມເຫັນຂອງພວກເຮົາໄວ້ທ້າຍເຫລັ້ມນີ້ກ່ຽວກັບເລື່ອງດັ່ງກ່າວນັ້ນ."*

*1–4, ລັດຖະບານຄວນຮັກສາອິດສະລະພາບຂອງຄວາມນຶກຄິດ ແລະ ການນະມັດສະການ; 5–8, ທຸກຄົນຄວນສະໜັບສະໜູນລັດຖະບານຂອງຕົນ ແລະ ນັບຖື ແລະ ເຄົາລົບກົດໝາຍ; 9–10, ສັງຄົມສາດສະໜາບໍ່ຄວນໃຊ້ອຳນາດການປົກຄອງ; 11–12, ມະນຸດມີສິດປົກປ້ອງພວກເຂົາເອງ ແລະ ຊັບສົມບັດຂອງພວກເຂົາ.*

1 ພວກເຮົາເຊື່ອວ່າ [ກ]ການປົກຄອງໄດ້
ຖືກ ຈັດ ຕັ້ງ ໂດຍ ພຣະ ເຈົ້າເພື່ອຜົນປະ
ໂຫຍດຂອງມະນຸດ; ແລະ ວ່າພຣະອົງຖື
ວ່າມະນຸດ [ຂ]ຮັບຜິດຊອບຕໍ່ການກະທຳ
ຂອງພວກເຂົາ, ທັງໃນການອອກກົດໝາຍ
ແລະ ການບໍລິຫານກົດໝາຍ, ເພື່ອຄວາມ
ດີ ແລະ ຄວາມປອດໄພຂອງສັງຄົມ.
2 ພວກເຮົາເຊື່ອວ່າບໍ່ມີການປົກຄອງ
ໃດຈະດຳລົງຢູ່ໄດ້ໃນສັນຕິສຸກ, ຍົກເວັ້ນ
ແຕ່ກົດນັ້ນໄດ້ຖືກຕັ້ງຂຶ້ນ ແລະ ຖືກຮັກສາ
ໄວ້ບໍ່ໃຫ້ລ່ວງລະເມີດ ໂດຍໃຫ້ຄວາມເຊື່ອ

---

71 *ກ* 2 ຂຄ 36:15–16; ຢມຢ 44:4–5.
72 *ກ* ອຊຢ 8:16–20.
73 *ກ* ມທ 8:11–12; ລກ 13:28; ຄພ 19:5. ຄມພ ຄວາມມືດທາງວິນຍານ; ນະລົກ.
**134** 1 *ກ* ຄພ 98:4–7; ຫຼຊ 1:12.
*ຂ* ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.

ໝັ້ນແກ່ທຸກຄົນທີ່ຈະໃຊ້ [ກ]ຄວາມສຳນຶກຢ່າງເປັນ [ຂ]ອິດສະລະ, ສິດ ແລະ ການຄວບຄຸມຊັບສົມບັດ, ແລະ [ຄ]ການປົກປ້ອງຊີວິດ.

3 ພວກເຮົາເຊື່ອ ວ່າ ການ ປົກຄອງທັງປວງຈຳເປັນຕ້ອງມີ [ກ]ເຈົ້າໜ້າທີ່ບ້ານເມືອງ ແລະ ຜູ້ພິພາກສາເພື່ອຮັກສາກົດດັ່ງກ່າວນັ້ນ; ແລະ ວ່າເຈົ້າໜ້າທີ່ດັ່ງກ່າວຊຶ່ງຈະບໍລິຫານກົດໝາຍດ້ວຍຄວາມທ່ຽງທຳ ແລະ ຍຸດຕິທຳຄວນຖືກຄົ້ນຫາ ແລະ ສະໜັບສະໜູນໂດຍສຽງຂອງຜູ້ຄົນຖ້າຫາກເປັນສາທາລະນະລັດ, ຫລື ໂດຍຄວາມປະສົງຂອງເຈົ້າແຜ່ນດິນ.

4 ພວກເຮົາເຊື່ອວ່າສາດສະໜາຖືກຈັດຕັ້ງຂຶ້ນໂດຍພຣະເຈົ້າ; ແລະ ວ່າມະນຸດມີຄວາມຮັບຜິດຊອບຕໍ່ພຣະອົງ, ແລະ ຕໍ່ພຣະອົງພຽງຜູ້ດຽວ, ກ່ຽວກັບການປະຕິບັດສາດສະໜາ, ຍົກເວັ້ນແຕ່ຄວາມຄິດຄວາມເຫັນຂອງພວກເຂົາທາງສາດສະໜາຂອງພວກເຂົາຈະກະຕຸ້ນພວກເຂົາໃຫ້ລະເມີດສິດທິ ແລະ ເສລີພາບຂອງຄົນອື່ນ; ແຕ່ພວກເຮົາບໍ່ເຊື່ອວ່າກົດໝາຍຂອງມະນຸດມີສິດທີ່ຈະແຊກແຊງການກຳນົດກົດ ຂອງການນະມັດສະການ ເພື່ອຄວບຄຸມຄວາມນຶກຄິດຂອງມະນຸດ, ຫລື ບັງຄັບຮູບແບບ [ກ]ການນະມັດສະການໃນສາທາລະນະຊົນ ຫລື ໃນສະຖານທີ່ສ່ວນຕົວ; ວ່າຜູ້ພິພາກາແຫ່ງລັດຄວນຢຸດຢັ້ງການອາຊະຍາກຳ, ແຕ່ບໍ່ຄວນບັງຄັບຄວາມນຶກຄິດ; ຄວນລົງໂທດຄວາມຜິດ, ແຕ່ບໍ່ຢັບຢັ້ງອິດສະລະພາບຂອງຈິດວິນຍານ.

5 ພວກເຮົາເຊື່ອວ່າມະນຸດທັງປວງຖືກຜູກມັດໃຫ້ສະໜັບສະໜູນ ແລະ ສົ່ງເສີມການປົກຄອງບ້ານເມືອງໃນບ່ອນທີ່ພວກເຂົາອາໄສຢູ່, ຕາບໃດທີ່ສິດທິປະຈຳຕົວ ແລະ ບໍ່ສາມາດໂອນໃຫ້ຄົນອື່ນໄດ້ຮັບການປົກປ້ອງໂດຍກົດໝາຍຂອງການປົກຄອງນັ້ນ; ແລະ ວ່າການກໍ່ຄວາມບໍ່ສະຫງົບສຸກ ແລະ [ກ]ການກະບົດບໍ່ເໝາະກັບພົນລະເມືອງທັງປວງທີ່ໄດ້ຮັບການຄຸ້ມຄອງດັ່ງກ່າວ, ແລະ ຄວນຖືກລົງໂທດຕາມສົມຄວນ; ແລະ ວ່າລັດຖະບານມີສິດທີ່ຈະອອກກົດເຊັ່ນນັ້ນຕາມການຕັດສິນຂອງພວກເຂົາເອງ ແລະ ຕາມການພິຈາລະນາຢ່າງດີທີ່ສຸດ ເພື່ອຮັກສາຜົນປະໂຫຍດຂອງສາທາລະນະຊົນ; ເຖິງຢ່າງໃດກໍຕາມ, ໃນຂະນະດຽວກັນ, ຍຶດໝັ້ນອິດສະລະພາບຂອງຄວາມນຶກຄິດໃຫ້ສັກສິດ.

6 ພວກເຮົາເຊື່ອວ່າມະນຸດທຸກຄົນຄວນໄດ້ຮັບການຍົກຍ້ອງໃນຕຳແໜ່ງຂອງເຂົາ, ຜູ້ປົກຄອງ ແລະ ຜູ້ພິພາກສາກໍຄືກັນ, ໂດຍຖືກຈັດຕັ້ງໄວ້ເພື່ອປົກປ້ອງຜູ້ບໍລິສຸດ ແລະ ລົງໂທດຜູ້ກະທຳຜິດ; ແລະ ວ່າ ມະນຸດທັງປວງຕ້ອງນັບຖື ແລະ ເຄົາລົບ [ກ]ກົດໝາຍ, ເພາະຖ້າຫາກປາດສະຈາກກົດໝາຍແລ້ວ ສັນຕິສຸກ ແລະ ຄວາມຖືກຕ້ອງປອງດອງຈະປ່ຽນເປັນອະນາທິປະໄຕ ແລະ ຄວາມຢ້ານກົວ; ກົດໝາຍຂອງມະນຸດໄດ້ຖືກສະຖາປະນາຂຶ້ນເພື່ອຈຸດປະສົງໃນການດູແລຜົນປະໂຫຍດຂອງເຮົາເປັນສ່ວນບຸກຄົນ ແລະ ປະຊາຊາດ, ລະຫວ່າງມະນຸດກັບມະນຸດ; ແລະ ກົດຂອງພຣະເຈົ້າໄດ້ຖືກມອບໃຫ້ຈາກສະຫວັນ, ໂດຍກຳນົດກົດກ່ຽວກັບທາງວິນຍານ, ເພື່ອສັດທາ ແລະ ການນະມັດສະການ, ຊຶ່ງມະນຸດຕ້ອງຕອບ

2 *ກ* ຄມພ ສຳນຶກ, ຄວາມສຳນຶກ.
*ຂ* ຄມພ ອຳເພີໃຈ.
*ຄ* ຄພ 42:18–19.
3 *ກ* ຄພ 98:8–10.
4 *ກ* ແອວ 21:21–22; ຫຼຊ 1:11. ຄມພ ນະມັດສະການ.
5 *ກ* ຫຼຊ 1:12. ຄມພ ກະບົດ, ການກະບົດ.
6 *ກ* ຄພ 58:21; 88:34.

ສະໜອງຕໍ່ພຣະຜູ້ສ້າງຂອງພວກເຂົາທັງ
ສອງຢ່າງ.
7 ພວກ ເຮົາ ເຊື່ອ ວ່າ ຜູ້ ປົກ ຄອງ, ລັດ,
ແລະ ລັດຖະບານມີສິດ, ແລະ ຖືກຜູກມັດ
ໃຫ້ ອອກ ກົດ ເພື່ອປົກປ້ອງພົນ ລະ ເມືອງ
ທັງປວງໃນການປະຕິບັດຕາມຄວາມເຊື່ອ
ທາງສາດສະໜາຂອງພວກເຂົາຢ່າງເປັນ
ອິດສະລະ; ແຕ່ພວກເຮົາບໍ່ເຊື່ອວ່າ ພວກ
ເຂົາມີສິດຢ່າງຖືກຕ້ອງທີ່ຈະຖອນສິດທິພິ
ເສດນີ້ໄປຈາກພົນລະເມືອງ, ຫລື ສັ່ງຫ້າມ
ພວກເຂົາໃນຄວາມຄິດຄວາມເຫັນຂອງ
ພວກເຂົາ, ຕາບໃດທີ່ຍັງສະແດງຄວາມນັບ
ຖື ແລະ ຄວາມຄາລະວະຕໍ່ກົດ ແລະ ຄວາມ
ຄິດຄວາມເຫັນເຊັ່ນນັ້ນທາງສາດສະໜາ
ບໍ່ໄດ້ເປັນສິ່ງກໍ່ຄວາມບໍ່ສະຫງົບ ຫລື ການ
ຄົບຄິດ.
8 ພວກເຮົາເຊື່ອວ່າການກໍ່ການອາຊະ
ຍາກຳຄວນຖືກ [ກ]ລົງໂທດຕາມສົມຄວນ
ຂອງຄວາມຜິດ; ຄືການຄາດຕະກຳ, ການ
ທໍລະຍົດ, ການປຸ້ນຈີ້, ການລັກ, ແລະ ການ
ທຳລາຍຄວາມສະຫງົບທົ່ວໄປ, ໃນທຸກກໍ
ລະນີ, ຄວນຖືກລົງໂທດຕາມຄວາມຜິດ
ແລະ ຄວາມໂນ້ມອຽງທີ່ຈະເຮັດຄວາມຊົ່ວ
ຮ້າຍໃນບັນດາມະນຸດ, ໂດຍກົດໝາຍຂອງ
ລັດຖະບານນັ້ນທີ່ຄວາມຜິດຖືກກະທຳຂຶ້ນ;
ແລະ ເພື່ອສັນຕິສຸກ ແລະ ຄວາມສະຫງົບ
ຂອງມະນຸດທັງປວງ ຄວນກ້າວອອກມາ
ແລະ ໃຊ້ຄວາມສາມາດຂອງພວກເຂົາໃນ
ການນຳຜູ້ກະທຳຜິດຕໍ່ກົດໝາຍທີ່ດີງາມມາ
ສູ່ການລົງໂທດ.
9 ພວກເຮົາບໍ່ເຊື່ອວ່າເປັນສິ່ງທີ່ຖືກຕ້ອງ
ທີ່ຈະຮ່ວມອິດທິພົນທາງສາດສະໜາເຂົ້າ
ກັບການປົກຄອງບ້ານເມືອງ, ຊຶ່ງໂດຍການ
ນີ້ສັງຄົມສາດສະໜາສັງຄົມໜຶ່ງໄດ້ຮັບ
ການອຸປະຖຳ ແລະ ອີກສັງຄົມໜຶ່ງຖືກສັ່ງ
ຫ້າມໃນສິດທິພິເສດທາງວິນຍານ, ແລະ
ສິດທິສ່ວນບຸກຄົນຂອງສະມາຊິກຂອງສັງ
ຄົມນັ້ນ, ໃນຖານະພົນລະເມືອງ, ຖືກປະຕິ
ເສດ.
10 ພວກເຮົາເຊື່ອວ່າສັງຄົມສາດສະໜາ
ທັງປວງມີສິດທີ່ຈະ ຈັດການກັບສະມາຊິກ
ຂອງຕົນ ສຳລັບການປະພຶດທີ່ບໍ່ຖືກຕ້ອງ,
ຕາມກົດ ແລະ ຂໍ້ບັງຄັບຂອງສັງຄົມເຫລົ່າ
ນັ້ນ; ຖ້າຫາກການ ຈັດການ ນັ້ນ ເປັນ ໄປ
ເພື່ອມິດຕະພາບ ແລະ ໃນຄວາມດີງາມ;
ແຕ່ພວກເຮົາບໍ່ເຊື່ອວ່າສັງຄົມສາດສະໜາ
ໃດໆ ມີສິດອຳນາດທີ່ຈະຟ້ອງຄົນໃດຂຶ້ນ
ສານກ່ຽວກັບຊັບສົມບັດ ແລະ ຊີວິດຂອງ
ພວກເຂົາ, ເພື່ອເອົາສິ່ງຂອງ ຂອງໂລກນີ້
ໄປຈາກພວກເຂົາ, ຫລື ເຮັດໃຫ້ພວກເຂົາ
ຕົກຢູ່ໃນຂັ້ນອັນຕະລາຍບໍ່ວ່າຈະເປັນຊີ
ວິດ ຫລື ແຂນຂາ, ຫລື ກໍ່ໃຫ້ເກີດຄວາມ
ເຈັບປວດທາງຮ່າງກາຍໃດໆກັບພວກເຂົາ.
ພວກເຂົາພຽງແຕ່ສາມາດ [ກ]ຕັດພວກເຂົາ
ອອກຈາກສັງຄົມຂອງພວກເຂົາເທົ່ານັ້ນ,
ແລະ ຖອນການເປັນສະມາຊິກຂອງພວກ
ເຂົາ.
11 ພວກ ເຮົາ ເຊື່ອ ວ່າ ມະນຸດ ຄວນ ອຸ
ທອນ ຕໍ່ກົດໝາຍບ້ານເມືອງ ເພື່ອໃຫ້ຊົດ
ໃຊ້ສຳລັບຄວາມຜິດ ແລະ ຄວາມທຸກໂສກ
ທັງປວງ, ທີ່ບຸກຄົນຖືກທຳຮ້າຍທາງຮ່າງ
ກາຍ ຫລື ມີການລະເມີດສິດທິໃນຊັບສົມ
ບັດ ຫລື ສັກສີ, ຊຶ່ງກົດໝາຍເຊັ່ນນັ້ນມີຢູ່
ເພື່ອປົກປ້ອງເລື່ອງດັ່ງກ່າວ; ແຕ່ພວກເຮົາ
ເຊື່ອວ່າ ມະນຸດທັງປວງມີສິດຢ່າງຖືກຕ້ອງ
ທີ່ຈະປ້ອງກັນຕົນເອງ, ໝູ່ເພື່ອນຂອງພວກ
ເຂົາ, ແລະ ຊັບສົມບັດ, ແລະ ລັດຖະບານ,
ຈາກການໂຈມຕີ ແລະ ການລ່ວງລ້ຳທີ່ຜິດ

---

8 ກ ແອວ 30:7–11; ຄພ 42:84–87.
10 ກ ຄມພ ການຖືກໄລ່ອອກ.

ກົດໝາຍຂອງທຸກຄົນໃນຍາມສຸກເສີນ, ໃນກໍລະນີທີ່ການອຸທອນຕໍ່ກົດໝາຍບໍ່ສາມາດເຮັດໄດ້ໂດຍທັນທີ, ແລະ ການຊ່ວຍເຫລືອບໍ່ທ່ວງທັນ.

12 ພວກເຮົາເຊື່ອວ່າ ເປັນສິ່ງຖືກຕ້ອງທີ່ຈະ [ກ]ສັ່ງສອນພຣະກິດຕິຄຸນແກ່ປະຊາຊາດຂອງແຜ່ນດິນໂລກ, ແລະ ເຕືອນຄົນຊອບທຳໃຫ້ຊ່ວຍຕົນເອງໃຫ້ລອດຈາກຄວາມເສື່ອມໂຊມຂອງໂລກ; ແຕ່ພວກເຮົາບໍ່ເຊື່ອວ່າ ເປັນສິ່ງຖືກຕ້ອງທີ່ຈະຫຍຸ້ງກ່ຽວກັບຂ້າທາດ, ທັງບໍ່ສັ່ງສອນພຣະກິດຕິຄຸນໃຫ້, ຫລືບໍ່ບັບຕິສະມາໃຫ້ພວກເຂົາເມື່ອມັນຂັດກັບຄວາມປາດຖະໜາຂອງນາຍພວກເຂົາ, ຫລື ເຂົ້າໄປຫຍຸ້ງກ່ຽວ ຫລື ຊັກຊວນພວກເຂົາແມ່ນແຕ່ໜ້ອຍດຽວ ເພື່ອເຮັດໃຫ້ພວກເຂົາບໍ່ພໍໃຈກັບສະພາບຂອງພວກເຂົາໃນຊີວິດນີ້, ອັນເປັນເຫດໃຫ້ເກີດອັນຕະລາຍແກ່ຊີວິດຂອງພວກເຂົາ; ການແຊກແຊງເຊັ່ນນັ້ນພວກເຂົາເຊື່ອວ່າເປັນສິ່ງຜິດກົດໝາຍ ແລະ ບໍ່ທ່ຽງທຳ, ແລະ ເປັນໄພຕໍ່ຄວາມສະຫງົບສຸກຂອງທຸກລັດຖະບານທີ່ອະນຸຍາດໃຫ້ມະນຸດຕົກຢູ່ໃນຄວາມເປັນທາດ.

# ພາກທີ 135

*ການປະກາດເຖິງການຕາຍເພາະຄວາມເຊື່ອຂອງໂຈເຊັບ ສະມິດ ຜູ້ເປັນສາດສະດາ ແລະ ອ້າຍຂອງເພິ່ນ, ໄຮຣຳ ສະມິດ ຜູ້ເປັນປິຕຸ, ທີ່ເມືອງຄາດເທດ, ລັດອິລິນອຍ, ວັນທີ 27 ເດືອນມິຖຸນາ, 1844. ເອກະສານນີ້ໄດ້ຖືກຕື່ມໃສ່ໃນທ້າຍຄຳສອນ ແລະ ພັນທະສັນຍາ ຊຸດສະບັບ 1844, ຊຶ່ງເກືອບພ້ອມແລ້ວ ສຳລັບການພິມ ເມື່ອໂຈເຊັບ ແລະ ໄຮຣຳ ໄດ້ຖືກຂ້າ.*

*1–2, ໂຈເຊັບ ແລະ ໄຮຣຳ ໄດ້ຖືກສັງຫານໃນຄຸກຄາດເທດ; 3, ຖານະອັນສູງສຸດຂອງສາດສະດາໄດ້ຖືກປ່າວປະກາດ; 4–7, ເລືອດບໍລິສຸດຂອງພວກເພິ່ນໄດ້ເປັນພະຍານເຖິງຄວາມຈິງ ແລະ ຄວາມສັກສິດຂອງວຽກງານ.*

1 ເພື່ອຜະນຶກປະຈັກພະຍານຂອງໜັງສືເຫລັ້ມນີ້ ແລະ ພຣະຄຳພີມໍມອນ, ພວກເຮົາຂໍປະກາດເຖິງ [ກ]ການຕາຍເພາະຄວາມເຊື່ອຂອງ [ຂ]ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ແລະ ໄຮຣຳ ສະມິດ ຜູ້ເປັນປິຕຸ. ພວກເພິ່ນໄດ້ຖືກຍິງໃນ [ຄ]ຄຸກຄາດເທດ, ວັນທີ 27 ເດືອນມິຖຸນາ, 1844, ປະມານຫ້າໂມງແລງ, ໂດຍກຸ່ມອັນຕະພານ—ທາໜ້າດ່າງດຳ—ປະມານ 150 ເຖິງ 200 ຄົນ. [ງ]ໄຮຣຳໄດ້ຖືກຍິງກ່ອນ ແລະ ລົ້ມລົງ, ໂດຍຮ້ອງວ່າ: *ເຮົາຕາຍແທ້ໆແລ້ວ!* ໂຈເຊັບໄດ້ໂດດຈາກປ່ອງຢ້ຽມ, ແລະ ຖືກຍິງຕາຍໃນຂະນະທີ່ໂດດລົງ, ໂດຍຮ້ອງວ່າ: *ໂອ້ ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຂ້າພຣະອົງ!* ພວກເພິ່ນທັງສອງໄດ້ຖືກຍິງອີກຫລັງຈາກຕາຍແລ້ວ, ໃນວິທີທີ່ໂຫດຮ້າຍ, ແລະ ທັງສອງໄດ້ຖືກລູກປືນສີ່ນັດ.

2 [ກ]ຈອນ ເທເລີ ແລະ ວິວເລີດ ຣິເຈີດສ໌, ສອງຄົນທີ່ເປັນອັກຄະສາວົກສິບສອງ, ໄດ້

12 *ກ* ຄມພ ສັ່ງສອນ; ວຽກງານເຜີຍແຜ່.
**135** 1 *ກ* ຄພ 5:22; 6:30. ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
*ຂ* ຄມພ ສະມິດ, ໂຈເຊັບ, ຜູ້ລູກ.
*ຄ* ຄມພ ຄຸກຄາດເທດ (ສະຫະລັດອາເມຣິກາ).
*ງ* ຄມພ ສະມິດ, ໄຮຣຳ.
2 *ກ* ຄມພ ເທເລີ, ຈອນ.

ຢູ່ໃນຫ້ອງໃນເວລານັ້ນ; ຄົນທຳອິດໄດ້ຮັບ
ບາດເຈັບໂດຍວິທີທີ່ປ່າເຖື່ອນດ້ວຍລູກ
ປືນສີ່ນັດ, ແຕ່ຈາກນັ້ນໄດ້ຫາຍດີເປັນປົກ
ກະຕິແລ້ວ; ຄົນທີສອງ, ດ້ວຍການອາລັກ
ຂາຂອງພຣະເຈົ້າ, ໄດ້ຫລົບທັນ, ໂດຍບໍ່ມີ
ຮູລູກປືນແມ່ນແຕ່ຮູດຽວຢູ່ທີ່ເສື້ອຜ້າຂອງ
ລາວ.
3 ໂຈເຊັບ ສະມິດ, ຜູ້ເປັນ [ກ]ສາດສະດາ
ແລະ [ຂ]ຜູ້ພະຍາກອນຂອງພຣະຜູ້ເປັນເຈົ້າ,
ໄດ້ເຮັດເພື່ອຄວາມລອດຂອງມະນຸດໃນ
ໂລກນີ້ຫລາຍກວ່າຄົນອື່ນ, ຍົກເວັ້ນແຕ່
ພຣະເຢຊູເທົ່ານັ້ນ. ໃນໄລຍະເວລາສັ້ນໆ
ຊາວປີ, ເພິ່ນໄດ້ນຳພຣະຄຳພີມໍມອນອອກ
ມາ, ຊຶ່ງເພິ່ນໄດ້ແປໂດຍຂອງປະທານ
ແລະ ອຳນາດຈາກພຣະເຈົ້າ, ແລະ ໄດ້
ເປັນເຄື່ອງມືໃຫ້ພິມໃນສອງທະວີບ; ໄດ້
ສົ່ງ [ຄ]ຄວາມສົມບູນແຫ່ງພຣະກິດຕິຄຸນ
ອັນເປັນນິດ, ຊຶ່ງມີຢູ່ໃນນັ້ນ, ໄປຍັງສີ່ສ່ວນ
ຂອງແຜ່ນດິນໂລກ; ໄດ້ນຳການເປີດເຜີຍ
ແລະ ພຣະບັນຍັດອອກມາ ຊຶ່ງຮວມເປັນ
ໜັງສື ຄຳສອນ ແລະ ພັນທະສັນຍາເຫລັ້ມ
ນີ້, ແລະ ເປັນເອກະສານ ແລະ ຄຳແນະນຳ
ທີ່ສະຫລາດອື່ນໆ ເພື່ອຜົນປະໂຫຍດຂອງ
ລູກຫລານມະນຸດ; ໄດ້ເຕົ້າໂຮມໄພ່ພົນຍຸກ
ສຸດທ້າຍຫລາຍພັນຄົນ, ໄດ້ສ້າງຕັ້ງ [ງ]ເມືອງ
ໃຫຍ່ແຫ່ງໜຶ່ງ, ແລະ ໄດ້ຝາກກຽດຕິຍົດ
ແລະ ຊື່ສຽງທີ່ບໍ່ມີວັນທຳລາຍໄວ້. ເພິ່ນໄດ້
ດຳເນີນຊີວິດຢ່າງສູງສົ່ງ, ແລະ ເພິ່ນໄດ້
ຕາຍຢ່າງສູງສົ່ງໃນສາຍພຣະເນດຂອງ
ພຣະເຈົ້າ ແລະ ໃນສາຍຕາຂອງຜູ້ຄົນ
ຂອງເພິ່ນ; ແລະ ເຊັ່ນດຽວກັບຜູ້ຖືກເຈີມ
ໄວ້ສ່ວນຫລາຍຂອງພຣະຜູ້ເປັນເຈົ້າໃນສະ
ໄໝບູຮານ, ໄດ້ຜະນຶກພາລະກິດຂອງເພິ່ນ
ແລະ ວຽກງານຂອງເພິ່ນດ້ວຍ [ຈ]ເລືອດຂອງ
ເພິ່ນເອງ; ແລະ ອ້າຍຂອງເພິ່ນ ໄຮຣຳ ກໍ
ຄືກັນ. ໃນຊີວິດພວກເພິ່ນບໍ່ເຄີຍໄດ້ແຍກ
ອອກຈາກກັນ, ແລະ ໃນຄວາມຕາຍພວກ
ເພິ່ນກໍບໍ່ໄດ້ແຍກອອກຈາກກັນ!
4 ເມື່ອ ໂຈເຊັບ ໄດ້ໄປເມືອງຄາດເທດ
ເພື່ອມອບຕົວຕາມຂໍ້ກຳນົດທາງກົດໝາຍ
ທີ່ນຳຂຶ້ນມາອ້າງ, ສອງ ຫລື ສາມມື້ກ່ອນ
ເພິ່ນຖືກລອບສັງຫານ, ເພິ່ນໄດ້ກ່າວວ່າ:
"ຂ້າພະເຈົ້າໄປດັ່ງ [ກ]ລູກແກະທີ່ຖືກນຳໄປ
ຂ້າ; ແຕ່ຂ້າພະເຈົ້າກໍສະຫງົບຢູ່ດັ່ງຕອນ
ເຊົ້າຂອງລະດູຮ້ອນ; ຂ້າພະເຈົ້າມີຄວາມ
ສຳນຶກປາດສະຈາກຄວາມຜິດຕໍ່ພຣະ
ເຈົ້າ, ແລະ ຕໍ່ມະນຸດທັງປວງ. ຂ້າພະເຈົ້າ
ຈະຕາຍຢ່າງຜູ້ບໍລິສຸດ, ແລະ ໃນວັນໜຶ່ງຜູ້
ຄົນຈະກ່າວເຖິງຂ້າພະເຈົ້າ—ເພິ່ນຖືກຂ້າ
ຢ່າງເລືອດເຢັນ."—ເຊົ້າວັນດຽວກັນ, ຫລັງ
ຈາກໄຮຣຳໄດ້ຕຽມພ້ອມແລ້ວທີ່ຈະໄປ—
ຈະເອີ້ນວ່າໄປຖືກຂ້າບໍ? ແມ່ນແລ້ວ, ເພາະ
ມັນເປັນເຊັ່ນນັ້ນ—ເພິ່ນໄດ້ອ່ານຂໍ້ຄວາມຕໍ່
ໄປນີ້, ໃນທ້າຍບົດທີສິບສອງຂອງອີເທີ, ໃນ
ພຣະຄຳພີມໍມອນ, ແລະ ໄດ້ພັບໜ້ານັ້ນໄວ້:
5 *ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ*
*ພະເຈົ້າໄດ້ອະທິຖານຫາພຣະຜູ້ເປັນເຈົ້າ*
*ຂໍໃຫ້ພຣະອົງປະທານຄຸນງາມຄວາມດີໃຫ້*
*ແກ່ຄົນຕ່າງຊາດ, ເພື່ອພວກເຂົາຈະໄດ້ມີ*
*ຄວາມໃຈບຸນ. ແລະ ເຫດການໄດ້ບັງເກີດ*
*ຂຶ້ນຄື ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະ*
*ເຈົ້າວ່າ: ຖ້າຫາກພວກເຂົາບໍ່ມີຄວາມໃຈ*
*ບຸນ ມັນກໍບໍ່ສຳຄັນສຳລັບເຈົ້າ, ເຈົ້າເປັນ*
*ຄົນຊື່ສັດ; ດັ່ງນັ້ນ ອາພອນຂອງເຈົ້າຈຶ່ງຖືກ*

3 *ກ* ຄນພ ສາດສະດາ.
*ຂ* ຄນພ ຜູ້ພະຍາກອນ.
*ຄ* ຄພ 35:17; 42:12.
ຄນພ ການຟື້ນຟູ
ພຣະກິດຕິຄຸນ.
*ງ* ຄນພ ເມືອງນາວູ, ລັດ
ອິລິນອຍ (ສະຫະ
ລັດອາເມຣິກາ).
*ຈ* ຮຣ 9:16–17;
ຄພ 136:39.
4 *ກ* ອຊຢ 53:7.

*ຊຳລະລ້າງໃຫ້* [ກ]*ຂາວສະອາດແລ້ວ. ແລະ*
*ຍ້ອນວ່າເຈົ້າເຫັນຄວາມອ່ອນແອຂອງເຈົ້າ*
*ເອງ, ເຈົ້າຈຶ່ງຖືກເຮັດໃຫ້ເຂັ້ມແຂງຂຶ້ນ, ຈົນ*
*ວ່າສາມາດໄປນັ່ງລົງໃນບ່ອນ ຊຶ່ງເຮົາໄດ້*
*ຕຽມໄວ້ໃນຜາສາດຂອງພຣະບິດາຂອງ*
*ເຮົາ. ແລະ ບັດນີ້ຂ້າພະເຈົ້າ . . . ຂໍກ່າວ*
*ຄຳອຳລາຄົນຕ່າງຊາດ, ແທ້ຈິງແລ້ວ, ແລະ*
*ທັງພີ່ນ້ອງຂອງຂ້າພະເຈົ້າຜູ້ທີ່ຂ້າພະເຈົ້າ*
*ຮັກແພງນຳອີກ, ຈົນກວ່າພວກເຮົາຈະພົບ*
*ກັນອີກຕໍ່ໜ້າ* [ຂ]*ບັນລັງພິພາກສາຂອງພຣະ*
*ຄຣິດ, ຊຶ່ງເປັນບ່ອນທີ່ຄົນທັງໝົດຈະຮູ້ຈັກ*
*ວ່າ ອາພອນຂອງຂ້າພະເຈົ້າບໍ່ມີຈຸດດ່າງ*
*ດຳດ້ວຍເລືອດຂອງທ່ານ.* ບັດນີ້ [ຄ]ຜູ້ເປັນ
ພະຍານໄດ້ສິ້ນຊີວິດໄປແລ້ວ, ແລະ ປະຈັກ
ພະຍານຂອງພວກເພິ່ນຍັງມີພະລັງຢູ່.
6 ໄຮຣຳ ສະມິດ ມີອາຍຸໄດ້ສີ່ສິບສີ່ປີໃນ
ເດືອນກຸມພາ, 1844, ແລະ ໂຈເຊັບ ສະມິດ
ມີອາຍຸໄດ້ສາມສິບແປດປີໃນເດືອນທັນວາ,
1843; ແລະ ນັບແຕ່ນີ້ຕໍ່ໄປຊື່ຂອງພວກ
ເພິ່ນຈະຖືກຈັດໄວ້ ໃນບັນດາຜູ້ທີ່ຖືກຂ້າ
ຍ້ອນຄວາມເຊື່ອສາດສະໜາ; ແລະ ຜູ້ອ່ານ
ໃນທຸກປະຊາຊາດຈະໄດ້ຖືກເຕືອນຄວາມ
ຈຳວ່າ ພຣະຄຳພີມໍມອນ, ແລະ ໜັງສືຄຳ
ສອນ ແລະ ພັນທະສັນຍາເຫລັ້ມນີ້ຂອງ
ສາດສະໜາຈັກ, ຕ້ອງແລກດ້ວຍເລືອດອັນ
ປະເສີດຂອງສັດຕະວັດທີສິບເກົ້າ ເພື່ອນຳ
ໜັງສືເຫລົ່ານີ້ອອກມາສຳລັບຄວາມລອດ
ຂອງໂລກທີ່ເສື່ອມໂຊມນີ້. ແລະວ່າຖ້າຫາກ
ໄຟສາມາດເຜົາຜານ [ກ]ຕົ້ນໄມ້ສົດຕົ້ນໜຶ່ງ
ເພື່ອລັດສະໝີພາບຂອງພຣະເຈົ້າ, ແລ້ວ
ມັນຈະສາມາດເຜົາໄໝ້ຕົ້ນໄມ້ແຫ້ງໄດ້ງ່າຍ
ຂະໜາດໃດ ເພື່ອເຮັດໃຫ້ສວນອະງຸ່ນທີ່
ເສື່ອມໂຊມລົງບໍລິສຸດ. ພວກເພິ່ນໄດ້ດຳ
ເນີນຊີວິດເພື່ອລັດສະໝີພາບ; ພວກເພິ່ນ
ໄດ້ຕາຍເພື່ອລັດສະໝີພາບ; ແລະ ລັດສະ
ໝີພາບເປັນລາງວັນນິລັນດອນຂອງພວກ
ເພິ່ນ. ຈາກຍຸກສະໄໝສູ່ຍຸກສະໄໝຊື່ຂອງ
ພວກເພິ່ນຈະລົງໄປເຖິງລູກຫລານດັ່ງເພັດ
ພອຍທີ່ໄດ້ຮັບການຊຳລະໃຫ້ບໍລິສຸດແລ້ວ.
7 ພວກເພິ່ນເປັນຜູ້ບໍລິສຸດຈາກອາຊະ
ຍາກຳໃດໆທັງສິ້ນ, ດັ່ງທີ່ພວກເພິ່ນໄດ້ຮັບ
ການພິສູດມາກ່ອນ, ແລະ ໄດ້ຖືກຄຸມຂັງ
ໃນຄຸກໂດຍການຄົບຄິດຂອງຄົນທໍລະຍົດ
ແລະ ຄົນຊົ່ວ; ແລະ *ເລືອດບໍລິສຸດຂອງ*
ພວກເພິ່ນຢູ່ເທິງພື້ນຄຸກຄາດເທດໄດ້ເປັນ
ຕາປະທັບອັນໃຫຍ່ທີ່ຜະນຶກ "ຄວາມເຊື່ອ
ຂອງຊາວມໍມອນ" ທີ່ບໍ່ສາມາດປະຕິເສດ
ໄດ້ໂດຍສານໃດໆຢູ່ໃນໂລກນີ້, ແລະ
*ເລືອດບໍລິສຸດຂອງ*ພວກເພິ່ນນັ້ນ ລັດອິລິ
ນອຍ ຕ້ອງຮັບຜິດຊອບ, ດ້ວຍການໝົດ
ສັດທາຂອງລັດຊຶ່ງປະຕິຍານໂດຍເຈົ້າລັດ,
ເປັນພະຍານເຖິງຄວາມຈິງຂອງພຣະກິດ
ຕິຄຸນອັນເປັນນິດທີ່ຊາວໂລກທັງປວງບໍ່
ສາມາດໂຕ້ແຍ້ງ; ແລະ *ເລືອດບໍລິສຸດຂອງ*
ພວກເພິ່ນຢູ່ເທິງປ້າຍແຫ່ງເສລີພາບ, ແລະ
ຢູ່ເທິງກົດອັນໃຫຍ່ຂອງສະຫະລັດອາເມຣິ
ກາ, ເປັນອັກຄະ*ທູດໃຫ້*ສາດສະໜາຂອງ
ພຣະເຢຊູຄຣິດ, ທີ່ຈະສຳພັດໃຈຂອງຄົນທີ່
ຊື່ສັດໃນບັນດາປະຊາຊາດທັງປວງ; ແລະ
*ເລືອດບໍລິສຸດຂອງ*ພວກເພິ່ນ, ພ້ອມດ້ວຍ
ເລືອດບໍລິສຸດຂອງຜູ້ຕາຍຍ້ອນຄວາມເຊື່ອ
ທັງປວງພາຍໃຕ້ [ກ]ແທ່ນທີ່ໂຢຮັນໄດ້ເຫັນ,
ຈະຮ້ອງທູນຈອມໂຍທາ ຈົນກວ່າພຣະອົງ
ຈະແກ້ແຄ້ນໃຫ້ເລືອດນັ້ນເທິງແຜ່ນດິນ
ໂລກ. ອາແມນ.

5 *ກ* ຄພ 88:74–75.
*ຂ* ອທ 12:36–38.
*ຄ* ຮຣ 9:16–17.
6 *ກ* ລກ 23:31.
7 *ກ* ພນມ 6:9.

# ພາກທີ 136

*ພຣະຄຳ ແລະ ພຣະປະສົງຂອງພຣະຜູ້ເປັນເຈົ້າ, ມອບໃຫ້ຜ່ານປະທານບຣິກຳ ຢັງ ທີ່ເມືອງ ວິນເຕີຄວດເຕີສ໌, ຄ້າຍອິດສະຣາເອນ, ໂອມາຮາ ເນເຊີນ, ຢູ່ຝັ່ງເບື້ອງຕາເວັນຕົກຂອງແມ່ນ້ຳມີເຊີຣີ, ໃກ້ຄັນໂຊ ບລັບສ໌, ລັດໄອໂອວາ.*

*1–16, ວິທີວາງລະບຽບຄ້າຍອິດສະຣາເອນ ໃນການເດີນທາງໄປທາງຕາເວັນຕົກໄດ້ຖືກອະທິບາຍ ໄວ້; 17–27, ໄພ່ພົນ ຂອງພຣະເຈົ້າໄດ້ຖືກບັນຊາໃຫ້ດຳລົງຊີວິດຕາມມາດຕະຖານຂອງພຣະກິດຕິຄຸນຫລາຍໆ ຂໍ້; 28–33, ໄພ່ພົນຂອງພຣະເຈົ້າຄວນຮ້ອງເພງ, ເຕັ້ນລຳ, ອະທິຖານ, ແລະ ຮຽນຮູ້ປັນຍາ; 34–42, ສາດສະດາທັງຫລາຍໄດ້ຖືກຂ້າເພື່ອວ່າພວກເພິ່ນຈະໄດ້ຮັບກຽດ ແລະ ຄົນຊົ່ວຈະຖືກກ່າວໂທດ.*

1 ພຣະຄຳ ແລະ ພຣະປະສົງຂອງພຣະຜູ້ເປັນເຈົ້າກ່ຽວກັບຄ້າຍອິດສະຣາເອນ ໃນການເດີນທາງຂອງພວກເຂົາໄປທາງຕາເວັນຕົກ:

2 ໃຫ້ຜູ້ຄົນທັງປວງຂອງ [ກ]ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ແລະ ຄົນທີ່ເດີນທາງໄປກັບພວກເຂົາ, ໄດ້ຖືກຈັດຕັ້ງເປັນກຸ່ມໆ, ພ້ອມດ້ວຍພັນທະສັນຍາ ແລະ ຄຳສັນຍາທີ່ຈະຮັກສາພຣະບັນຍັດທຸກປະການ ແລະ ຂໍ້ກຳນົດຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຮົາ.

3 ໃຫ້ແຕ່ລະກຸ່ມ ແຕ່ງຕັ້ງຜູ້ໜຶ່ງເປັນຫົວໜ້າກຸ່ມຂອງ [ກ]ໜຶ່ງຮ້ອຍຄົນ, ຫົວໜ້າກຸ່ມຂອງຫ້າສິບຄົນ, ແລະ ຫົວໜ້າກຸ່ມຂອງສິບຄົນ, ພ້ອມດ້ວຍປະທານ ແລະ ທີ່ປຶກສາສອງຄົນຂອງລາວເປັນຫົວໜ້າຂອງເຂົາເຈົ້າ, ພາຍໃຕ້ການຊີ້ນຳຂອງ [ຂ]ອັກຄະສາວົກສິບສອງ.

4 ແລະ ນີ້ຈະເປັນ [ກ]ພັນທະສັນຍາຂອງພວກເຂົາ—ວ່າພວກເຮົາຈະ [ຂ]ດຳເນີນຊີວິດຕາມ [ຄ]ພິທີການທັງປວງຂອງພຣະຜູ້ເປັນເຈົ້າ.

5 ໃຫ້ແຕ່ລະກຸ່ມຈັດຕຽມຕົນເອງດ້ວຍສັດລາກກວຽນ, ກວຽນ, ສະບຽງອາຫານ, ເຄື່ອງນຸ່ງຫົ່ມ, ແລະ ສິ່ງຂອງຈຳເປັນອື່ນໆສຳລັບການເດີນທາງ, ຕາມທີ່ພວກເຂົາສາມາດ.

6 ເມື່ອກຸ່ມຕ່າງໆໄດ້ຖືກຈັດຕຽມແລ້ວ ໃຫ້ພວກເຂົາໄປດ້ວຍຄວາມສຸດກຳລັງຂອງພວກເຂົາ, ເພື່ອຕຽມສຳລັບຄົນທີ່ຈະຢູ່ຕໍ່ໄປ.

7 ໃຫ້ແຕ່ລະກຸ່ມ, ພ້ອມດ້ວຍຫົວໜ້າກຸ່ມ ແລະ ປະທານຂອງເຂົາເຈົ້າ, ພິຈາລະນາວ່າ ມີຈັກຄົນທີ່ຈະໄປໄດ້ໃນລະດູໃບໄມ້ປົ່ງປີຕໍ່ໄປ; ຈາກນັ້ນໃຫ້ເລືອກເອົາຊາຍທີ່ມີຄວາມສາມາດ ແລະ ຊຳນານຈຳນວນຫລາຍພໍ, ເພື່ອເອົາຂະບວນກວຽນ, ເມັດພືດ, ແລະ ເຄື່ອງມືເຮັດຮົ້ວສວນໄປໃນຖານະເປັນຜູ້ບຸກເບີກໃນການຕຽມປູກພືດພັນໃນລະດູໃບໄມ້ປົ່ງ.

8 ໃຫ້ແຕ່ລະກຸ່ມແບກຫາບພາລະໃຫ້ເທົ່າທຽມກັນ, ຕາມຊັບສິນຂອງພວກເຂົາທີ່ໄດ້

**136** 2 *ກ* ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.
3 *ກ* ອພຍ 18:21–26.
*ຂ* ຄມພ ອັກຄະສາວົກ.
4 *ກ* ຄມພ ພັນທະສັນຍາ.
*ຂ* ຄມພ ເດີນ, ເດີນໄປກັບພຣະເຈົ້າ.
*ຄ* ຄມພ ພິທີການ.

ແບ່ງໃຫ້, ໃນການຮັບເອົາ [ກ]ຄົນຍາກຈົນ, [ຂ]ແມ່ໝ້າຍ, [ຄ]ເດັກກຳພ້າພໍ່, ແລະ ຄອບຄົວຂອງຄົນທີ່ໄດ້ເຂົ້າຮ່ວມກອງທັບ, ເພື່ອວ່າສຽງຮ້ອງຂອງແມ່ໝ້າຍ ແລະ ເດັກກຳພ້າພໍ່ຈະບໍ່ຂຶ້ນມາເຖິງພຣະກັນຂອງພຣະຜູ້ເປັນເຈົ້າເພື່ອຟ້ອງຜູ້ຄົນເຫລົ່ານີ້.

9 ໃຫ້ແຕ່ລະກຸ່ມຕຽມບ້ານເຮືອນ, ແລະ ທົ່ງໄວ້ປູກພືດພັນ, ໄວ້ໃຫ້ຄົນທີ່ຈະຢູ່ຕໍ່ໄປໃນລະດູນີ້; ແລະ ນີ້ຄືພຣະປະສົງຂອງພຣະຜູ້ເປັນເຈົ້າກ່ຽວກັບຜູ້ຄົນຂອງພຣະອົງ.

10 ໃຫ້ທຸກຄົນໃຊ້ອິດທິພົນ ແລະ ຊັບສົມບັດທັງປວງຂອງຕົນ ເພື່ອພາຜູ້ຄົນເຫລົ່ານີ້ອອກໄປຫາສະຖານທີ່ບ່ອນທີ່ພຣະຜູ້ເປັນເຈົ້າຈະຕັ້ງ [ກ]ສະເຕກແຫ່ງຊີໂອນ.

11 ແລະ ຖ້າຫາກພວກເຈົ້າເຮັດສິ່ງນີ້ດ້ວຍໃຈທີ່ບໍລິສຸດ, ດ້ວຍສຸດຄວາມຊື່ສັດ, ແລ້ວພວກເຈົ້າຈະໄດ້ຮັບ [ກ]ພອນ; ພວກເຈົ້າຈະໄດ້ຮັບພອນໃນຝູງສັດລ້ຽງຂອງພວກເຈົ້າ, ແລະ ໃນຝູງສັດໃຊ້ແຮງງານຂອງພວກເຈົ້າ, ແລະ ໃນທົ່ງຂອງພວກເຈົ້າ, ແລະ ໃນບ້ານເຮືອນຂອງພວກເຈົ້າ, ແລະ ໃນຄອບຄົວຂອງພວກເຈົ້າ.

12 ໃຫ້ຜູ້ຮັບໃຊ້ຂອງເຮົາເອຊະຣາ ທີເບັນສັນ ແລະ ອີຣາສະຕັສ ສະໂນ ຈັດຕຽມກຸ່ມໜຶ່ງ.

13 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາ ອໍສັນ ພະແຣັດ ແລະ ວິວເຜີດ ວູດຣັບ ຈັດຕຽມກຸ່ມໜຶ່ງ.

14 ພ້ອມນີ້, ໃຫ້ຜູ້ຮັບໃຊ້ຂອງເຮົາ ອາມາສາ ໄລມັນ ແລະ ຈອດ ເອ ສະມິດ ຈັດຕຽມກຸ່ມໜຶ່ງ.

15 ແລະ ກຳນົດປະທານ, ແລະ ຫົວໜ້າກຸ່ມຂອງໜຶ່ງຮ້ອຍຄົນ, ແລະ ຂອງຫ້າສິບຄົນ, ແລະ ຂອງສິບຄົນ.

16 ແລະ ໃຫ້ຜູ້ຮັບໃຊ້ຂອງເຮົາທີ່ໄດ້ກຳນົດໄວ້ອອກໄປ ແລະ ສິດສອນເລື່ອງນີ້, ຄວາມປະສົງຂອງເຮົາ, ໃຫ້ໄພ່ພົນຂອງພຣະເຈົ້າ, ເພື່ອວ່າພວກເຂົາຈະພ້ອມທີ່ຈະໄປສູ່ແຜ່ນດິນແຫ່ງສັນຕິສຸກ.

17 ຈົ່ງໄປຕາມທາງຂອງພວກເຈົ້າ ແລະ ເຮັດສິ່ງທີ່ເຮົາໄດ້ບອກພວກເຈົ້າ, ແລະ ຢ່າຢ້ານກົວສັດຕູຂອງພວກເຈົ້າ; ເພາະພວກເຂົາບໍ່ມີອຳນາດທີ່ຈະຢຸດຢັ້ງວຽກງານຂອງເຮົາໄດ້.

18 ຊີໂອນຈະຖືກ [ກ]ໄຖ່ຖອນໃນເວລາອັນເໝາະສົມຂອງເຮົາເອງ.

19 ແລະ ຖ້າຫາກຄົນໃດສະແຫວງຫາທີ່ຈະເສີມສ້າງຕົນເອງ, ແລະ ບໍ່ໄດ້ສະແຫວງຫາ [ກ]ຄຳແນະນຳຂອງເຮົາ, ແລ້ວເຂົາຈະບໍ່ມີອຳນາດ, ແລະ ຄວາມໂງ່ຈ້າຂອງເຂົາຈະຖືກສະແດງໃຫ້ປະຈັກ.

20 ຈົ່ງສະແຫວງຫາ; ແລະ [ກ]ຮັກສາຄຳໝັ້ນສັນຍາທີ່ມີຕໍ່ກັນ; ແລະ ຢ່າ [ຂ]ໂລບເອົາສິ່ງທີ່ເປັນຂອງພີ່ນ້ອງຂອງພວກເຈົ້າ.

21 ຈົ່ງ [ກ]ຮັກສາຕົນເອງຈາກຄວາມຊົ່ວທີ່ຈະກ່າວພຣະນາມຂອງພຣະຜູ້ເປັນເຈົ້າໄປໃນທາງຊົ່ວຮ້າຍ, ເພາະເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ, ແມ່ນແຕ່ [ຂ]ພຣະເຈົ້າຂອງບັນພະບຸລຸດຂອງພວກເຈົ້າ, ພຣະເຈົ້າຂອງອັບຣາຮາມ ແລະ ຂອງອີຊາກ ແລະ ຂອງຢາໂຄບ.

22 [ກ]ເຮົາຄືຜູ້ນັ້ນທີ່ໄດ້ນຳລູກຫລານຂອງ

---

8 ກ ຄມພ ຍາກຈົນ.
ຂ ຄມພ ແມ່ໝ້າຍ.
ຄ ຢກບ 1:27;
3 ນຟ 24:5.
10 ກ ຄມພ ສະເຕກ.
11 ກ ພບຍ 28:1–14.
ຄມພ ພອນ, ໃຫ້ພອນ, ເປັນພອນ.
18 ກ ຄພ 100:13.
19 ກ ຄມພ ຄຳແນະນຳ.
20 ກ ຄມພ ຊື່ສັດ, ຄວາມຊື່ສັດ.
ຂ ຄມພ ໂລບ, ຄວາມໂລບ.
21 ກ ຄມພ ຄຳຫຍາບຄາຍ.
ຂ ອພຍ 3:6;
1 ນຟ 19:10.
22 ກ ອພຍ 13:18; ຍມຍ 2:5–7;
1 ນຟ 5:15; ແອວ 36:28.
ຄມພ ເຢໂຮວາ.

ອິດສະຣາເອນອອກຈາກແຜ່ນດິນເອຢິບ;
ແລະ ແຂນຂອງເຮົາເດ່ອອກໄປໃນຍຸກສຸດ
ທ້າຍ, ເພື່ອ [ຂ]ຊ່ວຍກູ້ອິດສະຣາເອນຜູ້ຄົນ
ຂອງເຮົາ.
23 ຈົ່ງເຊົາ [ກ]ຂັດແຍ້ງກັນ; ຈົ່ງເຊົາ [ຂ]ນິນ
ທາຊຶ່ງກັນແລະກັນ.
24 ຈົ່ງ [ກ]ເຊົາມຶນເມົາ; ແລະ ໃຫ້ຖ້ອຍຄຳ
ຂອງພວກເຈົ້າ [ຂ]ເສີມສ້າງກັນແລະກັນ.
25 ຖ້າຫາກພວກເຈົ້າກູ້ຢືມສິ່ງຂອງຂອງ
ເພື່ອນບ້ານ, ພວກເຈົ້າຕ້ອງສົ່ງ ຄືນ ສິ່ງທີ່
ພວກເຈົ້າ [ກ]ຢືມມາ; ແລະ ຖ້າຫາກພວກເຈົ້າ
ຈ່າຍຄືນໃຫ້ເຂົາບໍ່ໄດ້ ກໍໃຫ້ຟ້າວໄປບອກ
ເພື່ອນບ້ານຂອງພວກເຈົ້າ, ຖ້າບໍ່ດັ່ງນັ້ນ
ເຂົາຈະກ່າວໂທດພວກເຈົ້າ.
26 ຖ້າ ຫາກ ພວກເຈົ້າພົບ ເຫັນສິ່ງທີ່
ເພື່ອນບ້ານຂອງພວກເຈົ້າເຮັດ [ກ]ເສຍ,
ພວກເຈົ້າຈະຕ້ອງຊອກຫາເຈົ້າຂອງດ້ວຍ
ຄວາມພາກພຽນຈົນວ່າພວກເຈົ້າຈະມອບ
ສິ່ງນັ້ນຄືນໃຫ້ເຂົາ.
27 ຈົ່ງ [ກ]ພາກພຽນ ໃນ ການ ຮັກ ສາ ສິ່ງ
ທີ່ພວກເຈົ້າມີ, ເພື່ອວ່າພວກເຈົ້າຈະໄດ້
ເປັນ [ຂ]ຜູ້ພິທັກຮັກສາທີ່ສະຫລາດ; ເພາະ
ວ່າມັນເປັນຂອງປະທານທີ່ມອບໃຫ້ລ້າໆ
ຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຈົ້າ, ແລະ ພວກເຈົ້າເປັນຜູ້ພິທັກຮັກ
ສາຂອງພຣະອົງ.
28 ຖ້າຫາກພວກເຈົ້າມ່ວນຊື່ນ, ຈົ່ງສັນ
ລະເສີນພຣະຜູ້ເປັນເຈົ້າດ້ວຍ [ກ]ການຮ້ອງ
ເພງ, ດ້ວຍດົນຕີ, ດ້ວຍ ການເຕັ້ນລຳ, ແລະ
ດ້ວຍ [ຂ]ຄຳອະທິຖານທີ່ເປັນຄວາມສັນລະ
ເສີນ ແລະ [ຄ]ຄວາມຂອບພຣະໄທ.
29 ຖ້າຫາກພວກເຈົ້າ [ກ]ເສົ້າສະຫລົດໃຈ,
ຈົ່ງເອີ້ນຫາພຣະຜູ້ເປັນເຈົ້າອົງເປັນພຣະ
ເຈົ້າຂອງພວກເຈົ້າດ້ວຍການອ້ອນວອນ,
ເພື່ອວ່າຈິດວິນຍານຂອງພວກເຈົ້າຈະ
[ຂ]ຊື່ນຊົມ.
30 ຢ່າ ຢ້ານ ກົວ ສັດ ຕູ ຂອງ ພວກ ເຈົ້າ,
ເພາະວ່າພວກເຂົາຢູ່ໃນມືຂອງເຮົາ ແລະ
ເຮົາຈະເຮັດກັບພວກເຂົາຕາມໃຈຂອງເຮົາ.
31 ຜູ້ຄົນຂອງເຮົາຕ້ອງຖືກ [ກ]ທົດລອງ
ໃນທຸກສິ່ງທັງປວງ, ເພື່ອວ່າພວກເຂົາຈະ
ຕຽມພ້ອມຮັບ [ຂ]ລັດສະໝີພາບທີ່ເຮົາມີໄວ້
ໃຫ້ພວກເຂົາ, ແມ່ນແຕ່ລັດສະໝີພາບຂອງ
ຊີໂອນ; ແລະ ຄົນໃດທີ່ບໍ່ອົດທົນກັບ [ຄ]ການ
ຕີສອນ ຄົນໆນັ້ນກໍບໍ່ມີຄ່າຄວນພໍສຳລັບອາ
ນາຈັກຂອງເຮົາ.
32 ໃຫ້ຄົນທີ່ໂງ່ຈ້າຮຽນຮູ້ [ກ]ປັນຍາໂດຍ
[ຂ]ການຖ່ອມຕົວ ແລະ ເອີ້ນຫາພຣະຜູ້ເປັນ
ເຈົ້າອົງເປັນພຣະເຈົ້າຂອງເຂົາ, ເພື່ອວ່າ
ຕາຂອງເຂົາຈະຖືກເປີດ ເພື່ອວ່າເຂົາຈະ
ຫລຽວເຫັນ, ແລະ ຫູຂອງເຂົາຈະຖືກເປີດ
ເພື່ອວ່າເຂົາຈະໄດ້ຍິນ;

---

22 *ຂ* ຢມຢ 30:10; ອຊກ 20:33–34; ຄພ 38:33.
23 *ກ* 3 ນຟ 11:29–30. ຄມພ ຂັດແຍ້ງ, ການຂັດແຍ້ງ.
*ຂ* ຄພ 20:54. ຄມພ ເວົ້າຈາບໍ່ດີ.
24 *ກ* ຄມພ ພຣະວາຈາແຫ່ງປັນຍາ.
*ຂ* ຄພ 108:7.
25 *ກ* ພສສ 37:21; ມຊຢ 4:28. ຄມພ ຊື່ສັດ, ຄວາມຊື່ສັດ; ໜີ້.
26 *ກ* ລລວ 6:4; ພບຍ 22:3.
27 *ກ* ຄມພ ພາກພຽນ, ຄວາມພາກພຽນ.
*ຂ* ຄມພ ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.
28 *ກ* ຄມພ ຮ້ອງ.
*ຂ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
*ຄ* 2 ຂຄ 5:13; ຄພ 59:15–16. ຄມພ ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.
29 *ກ* 2 ຊມອ 22:7.
*ຂ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
31 *ກ* ຄພ 101:4. ຄມພ ຍາກລຳບາກ, ຄວາມຍາກລຳບາກ.
*ຂ* ຣມ 8:18; ຄພ 58:3–4. ຄມພ ລັດສະໝີພາບ.
*ຄ* ຄມພ ຕີສອນ, ການຕີສອນ.
32 *ກ* ຄມພ ສະຕິປັນຍາ.
*ຂ* ຄມພ ຖ່ອມຕົນ, ຄວາມຖ່ອມຕົນ.

33 ເພາະ [ກ]ວິນຍານຂອງເຮົາໄດ້ຖືກສົ່ງ
ອອກໄປໃນໂລກເພື່ອໃຫ້ຄວາມສະຫວ່າງ
ແກ່ຄົນຖ່ອມຕົວ ແລະ ສຳນຶກຜິດ, ແລະ
ເພື່ອການກ່າວໂທດຄົນອະທຳ.
34 ອ້າຍເອື້ອຍນ້ອງຂອງພວກເຈົ້າໄດ້
ປະຕິເສດພວກເຈົ້າ ແລະ ປະຈັກພະຍານ
ຂອງພວກເຈົ້າ, ໝາຍເຖິງປະຊາຊາດທີ່ໄດ້
[ກ]ຂັບໄລ່ພວກເຈົ້າອອກໄປ;
35 ແລະ ບັດນີ້ ວັນແຫ່ງຄວາມສູນເສຍ
ຂອງພວກເຂົາຈະມາເຖິງ, ແມ່ນແຕ່ວັນ
ແຫ່ງຄວາມເສົ້າສະຫລົດໃຈ, ເໝືອນຜູ້ຍິງ
ໃກ້ຈະຄອດລູກ; ແລະ ຄວາມເສົ້າສະຫລົດ
ໃຈຂອງພວກເຂົາຈະໃຫຍ່ຫລວງ ຍົກເວັ້ນ
ແຕ່ ພວກເຂົາຈະກັບໃຈຢ່າງໄວ, ແທ້ຈິງ
ແລ້ວ, ຢ່າງໄວແທ້ໆ.
36 ເພາະພວກເຂົາໄດ້ຂ້າສາດສະດາ,
ແລະ ຄົນທີ່ໄດ້ຖືກສົ່ງໄປຫາພວກເຂົາ;
ແລະ ພວກເຂົາໄດ້ເຮັດໃຫ້ຜູ້ບໍລິສຸດຕ້ອງ
ເສຍຊີວິດ, ຊຶ່ງຮ້ອງຈາກພື້ນດິນຟ້ອງພວກ
ເຂົາ.
37 ສະນັ້ນ, ຢ່າປະຫລາດໃຈໃນເລື່ອງ
ເຫລົ່ານີ້, ເພາະວ່າພວກເຈົ້າຍັງບໍ່ [ກ]ບໍລິສຸດ
ເທື່ອ; ພວກເຈົ້າທົນກັບລັດສະໝີພາບຂອງ
ເຮົາຍັງບໍ່ໄດ້ເທື່ອ; ແຕ່ພວກເຈົ້າຈະໄດ້ເຫັນ
ມັນ ຖ້າຫາກພວກເຈົ້າຊື່ສັດໃນການຮັກສາ
ຖ້ອຍຄຳທັງໝົດຂອງເຮົາທີ່ເຮົາໄດ້ [ຂ]ມອບ
ໃຫ້ແກ່ພວກເຈົ້າ, ຈາກວັນເວລາຂອງ
ອາດາມເຖິງອັບຣາຮາມ, ຈາກ ອັບຣາຮາມ
ເຖິງໂມເຊ, ຈາກໂມເຊເຖິງພຣະເຢຊູ ແລະ
ອັກຄະສາວົກຂອງພຣະອົງ, ແລະ ຈາກ
ພຣະເຢຊູ ແລະ ອັກຄະສາວົກຂອງພຣະ
ອົງເຖິງໂຈເຊັບ ສະມິດ, ຜູ້ທີ່ເຮົາໄດ້ເອີ້ນຫາ
ໂດຍ [ຄ]ເຫລົ່າທູດຂອງເຮົາ, ຜູ້ຮັບໃຊ້ທີ່ປະຕິ
ບັດຂອງເຮົາ, ແລະ ໂດຍສຽງຂອງເຮົາເອງ
ອອກຈາກສະຫວັນ, ເພື່ອນຳວຽກງານຂອງ
ເຮົາອອກມາ;
38 ຊຶ່ງຮາກຖານນັ້ນລາວໄດ້ວາງໄວ້,
ແລະ ລາວຊື່ສັດ; ແລະ ເຮົາໄດ້ຮັບເອົາລາວ
ໄວ້ກັບຕົວເຮົາເອງ.
39 ຫລາຍຄົນໄດ້ປະຫລາດໃຈເພາະ
ການຕາຍຂອງລາວ; ແຕ່ມັນຈຳເປັນທີ່ລາວ
ຈະ [ກ]ຜະນຶກ [ຂ]ປະຈັກພະຍານຂອງລາວໄວ້
ດ້ວຍ [ຄ]ເລືອດຂອງລາວ, ເພື່ອວ່າລາວຈະ
ໄດ້ຮັບກຽດ ແລະ ຄົນຊົ່ວຈະຖືກກ່າວໂທດ.
40 ເຮົາບໍ່ໄດ້ປົດປ່ອຍພວກເຈົ້າຈາກ
[ກ]ສັດຕູຂອງພວກເຈົ້າບໍ, ໃນວິທີດຽວເທົ່າ
ນັ້ນທີ່ເຮົາໄດ້ຝາກພະຍານເຖິງນາມຂອງ
ເຮົາໄວ້?
41 ບັດນີ້, ສະນັ້ນ, ຈົ່ງເຊື່ອຟັງ, ໂອ້ ພວກ
ເຈົ້າຜູ້ຄົນແຫ່ງ [ກ]ສາດສະໜາຈັກຂອງເຮົາ;
ແລະ ພວກເຈົ້າແອວເດີຈົ່ງຟັງນຳກັນ; ພວກ
ເຈົ້າໄດ້ຮັບ [ຂ]ອານາຈັກຂອງເຮົາແລ້ວ.
42 ຈົ່ງພາກພຽນໃນການຮັກສາບັນຍັດ
ທັງໝົດຂອງເຮົາ, ຖ້າບໍ່ດັ່ງນັ້ນການພິພາກ
ສາຈະມາເຖິງພວກເຈົ້າ, ແລະ ສັດທາຂອງ
ພວກເຈົ້າຈະລົ້ມເຫລວ, ແລະ ສັດຕູຂອງ
ພວກເຈົ້າຈະມີໄຊເໜືອພວກເຈົ້າ. ສະນັ້ນ
ບໍ່ມີອັນໃດອີກໃນເວລານີ້. ອາແມນ ແລະ
ອາແມນ.

33 ກ ຄມພ ພຣະວິນຍານບໍລິສຸດ.
34 ກ ຄມພ ຂົ່ມເຫັງ, ການຂົ່ມເຫັງ.
37 ກ ຄມພ ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.
ຂ ຣລມ 8:18.
ຄ ພນມ 14:6; ຄພ 110:11–16; 128:19–21; ຈສ—ປ 1:30–47.
39 ກ ມຊຢ 17:20; ຄພ 135:3.
ຂ ຄມພ ປະຈັກພະຍານ.
ຄ ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
40 ກ ອພຍ 23:22; ຄພ 8:4; 105:15.
41 ກ ຄມພ ສາດສະໜາຈັກຂອງພຣະເຢຊູຄຣິດ.
ຂ ດນອ 7:27.

# ພາກທີ 137

*ພາບ ນິມິດທີ່ມອບ ໃຫ້ແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ໃນພຣະວິຫານທີ່ເມືອງເຄີດແລນ, ລັດໂອໄຮໂອ, ວັນທີ 21 ເດືອນມັງກອນ, 1836. ເຫດການເທື່ອນີ້ເປັນການປະຕິບັດພິທີການ ໃນການຕຽມສຳລັບການອຸທິດພຣະວິຫານ.*

*1–6, ສາດສະດາເຫັນອ້າຍຂອງເພິ່ນ ອາລ໌ວິນ ຢູ່ໃນອານາຈັກຊັ້ນສູງ; 7–9, ຄຳສອນກ່ຽວກັບຄວາມລອດສຳລັບຄົນຕາຍໄດ້ຖືກເປີດເຜີຍ; 10, ເດັກນ້ອຍທຸກຄົນລອດໃນອານາຈັກຊັ້ນສູງ.*

1 [ກ]ສະຫວັນ ໄດ້ ເປີດ ຕໍ່ ພວກ ເຮົາ, ແລະ
ຂ້າພະເຈົ້າໄດ້ເຫັນອານາຈັກ [ຂ]ຊັ້ນສູງຂອງ
ພຣະເຈົ້າ, ແລະ ລັດສະໝີພາບຂອງທີ່ນັ້ນ,
ຈະຢູ່ໃນ [ຄ]ຮ່າງກາຍ ຫລື ນອກຮ່າງກາຍຂ້າ
ພະເຈົ້າບອກບໍ່ໄດ້.
2 ຂ້າພະເຈົ້າໄດ້ເຫັນຄວາມງາມອັນເລີດ
ລ້ຳຂອງ [ກ]ປະຕູຊຶ່ງໂດຍທາງນັ້ນຜູ້ເປັນທາ
ຍາດຂອງອານາຈັກນັ້ນຈະເຂົ້າໄປ, ຊຶ່ງ
ເໝືອນກັບ [ຂ]ແປວໄຟທີ່ເປັນວົງ;
3 ພ້ອມທັງບັນລັງອັນ [ກ]ເຈີດຈ້າຂອງພຣະ
ເຈົ້າ, ຊຶ່ງ [ຂ]ພຣະບິດາ ແລະ [ຄ]ພຣະບຸດໄດ້
ປະທັບນັ່ງຢູ່ເທິງນັ້ນ.
4 ຂ້າພະເຈົ້າໄດ້ເຫັນຖະໜົນອັນສວຍ
ງາມຂອງອານາຈັກນັ້ນ, ຊຶ່ງມີລັກສະນະ
ລາດດ້ວຍ [ກ]ຄຳ.
5 ຂ້າພະເຈົ້າໄດ້ເຫັນພໍ່ [ກ]ອາດາມ ແລະ
[ຂ]ອັບຣາຮາມ; ແລະ [ຄ]ພໍ່ຂອງຂ້າພະເຈົ້າ
ແລະ [ງ]ແມ່ຂອງຂ້າພະເຈົ້າ; ອ້າຍຂອງຂ້າ
ພະເຈົ້າ [ຈ]ອາລ໌ວິນ, ທີ່ໄດ້ຫລັບໄປດົນນານ
ແລ້ວ;
6 ແລະ ປະຫລາດໃຈວ່າລາວໄດ້ຮັບ
ອານາຈັກນັ້ນເປັນ [ກ]ມູນມໍລະດົກໄດ້ແນວ
ໃດ, ໂດຍທີ່ເຫັນວ່າລາວໄດ້ຈາກຊີວິດນີ້
ໄປກ່ອນພຣະຜູ້ເປັນເຈົ້າໄດ້ລົງພຣະຫັດ
ຂອງພຣະອົງເພື່ອເຕົ້າໂຮມອິດສະຣາເອນ
ເປັນຄັ້ງ [ຂ]ທີສອງ, ແລະ ຍັງບໍ່ໄດ້ຮັບ [ຄ]ບັບຕິ
ສະມາເພື່ອການປົດບາບ.
7 [ກ]ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ມາ
ເຖິງຂ້າພະເຈົ້າດັ່ງນີ້, ໂດຍກ່າວວ່າ: ຄົນທັງ
ປວງທີ່ໄດ້ຕາຍໄປ [ຂ]ປາດສະຈາກຄວາມຮູ້

**137** 1 *ກ* ກຈກ 7:55–56; 1 ນຟ 1:8; ຣລມ 5:45–49; ຈສ—ປ 1:43.
*ຂ* ຄມພ ລັດສະໝີພາບຂອງຊັ້ນສູງ.
*ຄ* 2 ກຣທ 12:2–4; 1 ນຟ 11:1; ມຊ 1:11.
2 *ກ* 2 ນຟ 9:41; 31:17.
*ຂ* ອພຍ 24:17; ອຊຢ 33:14–15; ຣລມ 5:23; ຄພ 130:7.
3 *ກ* ອຊຢ 6:1; ອຊກ 1:26–28.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ຄ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບຸດ.
4 *ກ* ພນມ 21:21; ຄພ 110:2.
5 *ກ* ຄມພ ອາດາມ.
*ຂ* ຄພ 132:29. ຄມພ ອັບຣາຮາມ.
*ຄ* ຄພ 124:19. ຄມພ ສະມິດ, ໂຈເຊັບ, ຜູ້ພໍ່.
*ງ* ຄມພ ສະມິດ, ລູສີ ແມັກ.
*ຈ* ຈສ—ປ 1:4.
6 *ກ* ຄມພ ຄວາມລອດສຳລັບຄົນຕາຍ.
*ຂ* ອຊຢ 11:11; 1 ນຟ 22:10–12; ຢຄ 6:2. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຄ* ຢຮ 3:3–5; 2 ນຟ 9:23; ອທ 4:18–19; ຄພ 76:50–52; 84:74. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
7 *ກ* ຣລມ 5:30. ຄມພ ເປີດເຜີຍ, ການເປີດເຜີຍ.
*ຂ* ປຈສ 1 ປຕ 4:6 (ພາກທ້ອຍທ້າຍ); 2 ນຟ 9:25–26; ມຊຢ 15:24.

ເລື່ອງພຣະກິດຕິຄຸນນີ້, ຜູ້ທີ່ຈະຮັບໄວ້ຖ້າ
ຫາກພວກເຂົາໄດ້ຖືກອະນຸຍາດໃຫ້ຢູ່ຕໍ່ໄປ,
ຈະເປັນ [ຄ]ທາຍາດແຫ່ງອານາຈັກ [ງ]ຊັ້ນສູງ
ຂອງພຣະເຈົ້າ;
8 ຜູ້ຄົນທັງປວງທີ່ຈະຕາຍນັບແຕ່ນີ້ເປັນ
ຕົ້ນໄປປາດສະຈາກຄວາມຮູ້ເຖິງເລື່ອງນີ້
ກໍຄືກັນ, ຜູ້ [ກ]ທີ່ຈະຮັບມັນໄວ້ດ້ວຍສຸດໃຈ
ຂອງພວກເຂົາ, ຈະເປັນທາຍາດຂອງອາ
ນາຈັກນັ້ນ;
9 ເພາະ ເຮົາ, ພຣະຜູ້ເປັນເຈົ້າ, ຈະ [ກ]ພິ
ພາກສາມະນຸດທັງປວງຕາມ [ຂ]ວຽກງານ
ຂອງພວກເຂົາ, ຕາມ [ຄ]ຄວາມປາດຖະໜາ
ຂອງໃຈຂອງພວກເຂົາ.
10 ແລະ ຂ້າພະເຈົ້າໄດ້ຫລຽວເບິ່ງເດັກ
ນ້ອຍທັງປວງຜູ້ໄດ້ຕາຍກ່ອນ [ກ]ອາຍຸທີ່ຮູ້ຈັກ
ຮັບຜິດຊອບກໍ [ຂ]ລອດໃນອານາຈັກຊັ້ນສູງ
ແຫ່ງສະຫວັນຄືກັນ.

---

# ພາກທີ 138

*ພາບນິມິດມອບໃຫ້ແກ່ປະທານ ໂຈເຊັບ ແອັຟ ສະມິດ ໃນເມືອງເຊົາເລັກ, ລັດຢູທາ, ວັນທີ 3 ເດືອນຕຸລາ, 1918. ໃນການກ່າວເປີດກອງປະຊຸມໃຫຍ່ສາມັນເຄິ່ງປີ ຄັ້ງທີ 89 ຂອງສາດສະໜາຈັກ, ວັນທີ 4 ເດືອນຕຸລາ 1918, ປະທານສະມິດໄດ້ປະກາດວ່າ ເພິ່ນໄດ້ຮັບການສື່ສານຫລາຍຢ່າງຈາກສະຫວັນໃນລະຫວ່າງເດືອນທີ່ຜ່ານມາ. ຢ່າງໜຶ່ງໃນການສື່ສານນັ້ນທີ່ປະທານສະມິດໄດ້ຮັບໃນວັນກ່ອນແມ່ນກ່ຽວກັບພຣະຜູ້ຊ່ວຍໃຫ້ລອດມາຢ້ຽມຢາມວິນຍານຂອງຄົນຕາຍໃນຂະນະທີ່ພຣະສົບຂອງພຣະອົງຢູ່ໃນອຸບມຸງ. ມັນໄດ້ຖືກຂຽນໄວ້ທັນທີຫລັງຈາກປິດກອງປະຊຸມໃຫຍ່. ໃນວັນທີ 31 ເດືອນຕຸລາ, 1918, ມັນໄດ້ຖືກມອບໃຫ້ທີ່ປຶກສາຂອງຝ່າຍປະທານສູງສຸດ, ສະພາອັກຄະສາວົກສິບສອງ, ແລະ ປິຕຸ, ແລະ ມັນໄດ້ຖືກຮັບຮູ້ຢ່າງເປັນເອກະສັນຈາກພວກເພິ່ນ.*

*1–10, ປະທານໂຈເຊັບ ແອັຟ ສະມິດ ໄຕ່ຕອງເຖິງການຂຽນຂອງເປໂຕ ແລະ ການໄປຢ້ຽມຢາມໂລກວິນຍານຂອງພຣະຜູ້ເປັນເຈົ້າ; 11–24, ປະທານສະມິດເຫັນຄົນຕາຍທີ່ຊອບທຳເຕົ້າໂຮມຢູ່ໃນທີ່ສຸຂະເສີມ ແລະ ການປະຕິບັດສາດສະໜາກິດຂອງພຣະຄິດໃນທ່າມກາງພວກເຂົາ; 25–37, ເພິ່ນເຫັນການສັ່ງສອນພຣະກິດຕິຄຸນໄດ້ຖືກຈັດຕັ້ງໃນທ່າມກາງວິນຍານ; 38–52, ເພິ່ນເຫັນອາດາມ, ເອວາ, ແລະ ສາດສະດາຜູ້ບໍລິສຸດຫລາຍຄົນໃນໂລກວິນຍານພິຈາລະນາວ່າວິນຍານຂອງພວກເພິ່ນກ່ອນການຟື້ນຄືນຊີວິດເປັນສະພາບຂອງການຖືກຈ່ອງຈຳ; 53–60, ຄົນຕາຍທີ່ຊອບທຳໃນຍຸກນີ້ຈະທຳງານຂອງພວກເຂົາຕໍ່ໄປຢູ່ໃນໂລກວິນຍານ.*

---

7 *ຄ* ຄພ 76:50–70.
*ງ* ຄມພ ລັດສະໝີພາບຂອງຊັ້ນສູງ.
8 *ກ* ແອວ 18:32; ຄພ 6:16.
9 *ກ* ພນມ 20:12–13. ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
*ຂ* ຄມພ ວຽກງານ.
*ຄ* ຄພ 64:34. ຄມພ ໃຈ.
10 *ກ* ຄມພ ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
*ຂ* ຄມພ ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ.

1 ວັນທີສາມຂອງເດືອນຕຸລາ, ໃນປີພັນ
ເກົ້າຮ້ອຍສິບແປດ, ຂ້າພະເຈົ້າໄດ້ນັ່ງ [ກ]ໄຕ່
ຕອງຂໍ້ພຣະຄຳພີຢູ່ໃນຫ້ອງຂອງຂ້າພະ
ເຈົ້າ;
2 ແລະ ໄດ້ຄຳນຶງເຖິງການເສຍສະລະ
[ກ]ຊົດໃຊ້ອັນຍິ່ງໃຫຍ່ທີ່ພຣະບຸດຂອງພຣະ
ເຈົ້າໄດ້ເຮັດ, ເພື່ອ [ຂ]ການໄຖ່ໂລກ;
3 ແລະ [ກ]ຄວາມຮັກອັນຍິ່ງໃຫຍ່ ແລະ
ປະເສີດທີ່ພຣະບິດາ ແລະ ພຣະບຸດໄດ້
ສະແດງໃຫ້ປະຈັກໃນການສະເດັດມາສູ່
ໂລກຂອງ [ຂ]ພຣະຜູ້ໄຖ່;
4 ເພື່ອວ່າໂດຍ [ກ]ການຊົດໃຊ້ຂອງພຣະ
ອົງ, ແລະ ໂດຍ [ຂ]ການເຊື່ອຟັງຕໍ່ຫລັກທຳ
ພຣະກິດຕິຄຸນ, ມະນຸດຊາດຈະລອດ.
5 ໃນຂະນະທີ່ຂ້າພະເຈົ້າໄຕ່ຕອງຢູ່ນັ້ນ,
ຈິດໃຈຂອງຂ້າພະເຈົ້າໄດ້ຫວນຄິດເຖິງ
ການຂຽນຂອງອັກຄະສາວົກເປໂຕ, ເຖິງ
[ກ]ໄພ່ພົນຂອງພຣະເຈົ້າໃນສະໄໝບູຮານ
ທີ່ໄດ້ກະຈັດກະຈາຍໄປທົ່ວ [ຂ]ປົນໂຕ,
ຄາລາເຕຍ, ກາເປໂດເກຍ, ແລະ ພາກ
ອື່ນໆຂອງເອເຊຍ, ບ່ອນທີ່ພຣະກິດຕິຄຸນ
ໄດ້ຖືກສັ່ງສອນຫລັງຈາກການຄຶງຂອງ
ພຣະຜູ້ເປັນເຈົ້າ.
6 ຂ້າພະເຈົ້າໄດ້ເປີດພຣະຄຣິສຕະທຳ
ຄຳພີ ແລະ ໄດ້ອ່ານບົດທີສາມ ແລະ ທີສີ່
ໃນສານສະບັບທຳອິດຂອງເປໂຕ, ແລະ
ໃນຂະນະທີ່ຂ້າພະເຈົ້າອ່ານ, ຂ້າພະເຈົ້າ
ປະທັບໃຈຫລາຍ, ຫລາຍກວ່າທີ່ຂ້າພະເຈົ້າ
ເຄີຍເປັນມາກ່ອນ, ກັບຂໍ້ຄວາມດັ່ງຕໍ່ໄປນີ້:
7 "ດ້ວຍວ່າຄັ້ງໜຶ່ງພຣະຄຣິດກໍໄດ້ຮັບ
ທຸກທໍລະມານແທນບາບເໝືອນກັນ, ຜູ້ທ່ຽງ
ທຳແທນຜູ້ບໍ່ທ່ຽງທຳ, ເພື່ອຈະໄດ້ນຳເຮົາ
ທັງຫລາຍໄປຫາພຣະເຈົ້າ, ໂດຍທີ່ໄດ້ຖືກ
ປະຫານໃນເນື້ອໜັງ, ແຕ່ພຣະວິນຍານໄດ້
ຖືກບັນດານໃຫ້ມີຊີວິດຊີວາຄືນ:
8 "ໂດຍທາງນັ້ນພຣະອົງຈຶ່ງໄດ້ສະເດັດ
ໄປປະກາດແກ່ບັນດາວິນຍານທີ່ຢູ່ໃນ
[ກ]ຄຸກ;
9 "ຊຶ່ງເມື່ອກ່ອນນັ້ນບໍ່ໄດ້ຍອມເຊື່ອຟັງ,
ຄື ເມື່ອຕອນພຣະເຈົ້າໄດ້ສະແດງຄວາມ
ອົດກັ້ນໃນສະໄໝຂອງໂນອາ, ຂະນະທີ່ກຳ
ລັງຕຽມນາວາ, ຊຶ່ງໃນນັ້ນໜ້ອຍຄົນ, ນັ້ນ
ຄື, ແປດຄົນທີ່ໄດ້ລອດຊີວິດຈາກນ້ຳຖ້ວມ
ນັ້ນ." (1 ເປໂຕ 3:18–20.)
10 "ດ້ວຍເຫດນີ້ແຫລະ ຂ່າວປະເສີດ
ຈຶ່ງໄດ້ປະກາດແກ່ພວກຄົນທີ່ຕາຍໄປແລ້ວ
ເໝືອນກັນ, ເພື່ອເຂົາຈະໄດ້ຖືກພິພາກ
ສາຕາມມະນຸດໃນເນື້ອໜັງ, ແຕ່ດຳເນີນຊີ
ວິດຕາມພຣະເຈົ້າໃນວິນຍານ." (1 ເປໂຕ
4:6.)
11 ໃນຂະນະທີ່ຂ້າພະເຈົ້າໄດ້ໄຕ່ຕອງ
ເຖິງເລື່ອງເຫລົ່ານີ້ຊຶ່ງມີ [ກ]ຂຽນໄວ້, [ຂ]ດວງ
ຕາແຫ່ງຄວາມເຂົ້າໃຈຂອງຂ້າພະເຈົ້າໄດ້
ເປີດອອກ, ແລະ ພຣະວິນຍານຂອງພຣະຜູ້
ເປັນເຈົ້າໄດ້ມາ [ຄ]ສະຖິດຢູ່ເທິງຂ້າພະເຈົ້າ,
ແລະ ຂ້າພະເຈົ້າໄດ້ເຫັນໝູ່ [ງ]ຄົນຕາຍ, ທັງ
ຜູ້ນ້ອຍ ແລະ ຜູ້ໃຫຍ່.
12 ແລະ ມີໝູ່ວິນຍານຂອງ [ກ]ຄົນທີ່ທ່ຽງ

**138** 1 *ກ* ຄມພ ໄຕ່ຕອງ.
2 *ກ* ມທ 20:28.
ຄມພ ຊົດໃຊ້,
ການຊົດໃຊ້.
*ຂ* ຄມພ ແຜນແຫ່ງການໄຖ່.
3 *ກ* ຢຮ 3:16.
ຄມພ ຮັກ, ຄວາມຮັກ.
*ຂ* ຄມພ ພຣະຜູ້ໄຖ່.
4 *ກ* ຫຼຊ 1:3.
*ຂ* ມທ 7:21.
ຄມພ ເຊື່ອຟັງ, ການ
ເຊື່ອຟັງ, ຟັງຄວາມ.
5 *ກ* ອສ ໄພ່ພົນຂອງພຣະ
ເຈົ້າໃນສະໄໝກ່ອນ.
*ຂ* 1 ປຕ 1:1.
8 *ກ* ອຊຢ 61:1; ລກ 4:18;
ຄພ 76:73–74; 88:99.
11 *ກ* ຄມພ ພຣະຄຳພີ—ຄຸນ
ຄ່າຂອງພຣະຄຳພີ.
*ຂ* ອຟຊ 1:18;
ຄພ 76:10, 12, 19.
*ຄ* ອຊຢ 11:2.
*ງ* ຄມພ ວິນຍານ.
12 *ກ* ຄພ 76:69–70.

ທຳມາເຕົ້າໂຮມກັນຢູ່ເປັນກຸ່ມໃຫຍ່ໃນບ່ອນ
ໜຶ່ງ, ຜູ້ໄດ້ [ຂ]ຊື່ສັດໃນປະຈັກພະຍານ ເຖິງ
ພຣະເຢຊູ ໃນຕອນທີ່ເຂົາເຈົ້າມີຊີວິດຢູ່ໃນ
ຄວາມເປັນມະຕະ;
13 ແລະ ຜູ້ໄດ້ [ກ]ເສຍສະລະໃນລັກສະ
ນະດຽວກັນ ກັບການເສຍສະລະອັນຍິ່ງ
ໃຫຍ່ຂອງພຣະບຸດຂອງພຣະເຈົ້າ, ແລະ
ໄດ້ [ຂ]ທົນຮັບຄວາມທຸກຍາກລຳບາກໃນ
ພຣະນາມຂອງພຣະຜູ້ໄຖ່ຂອງເຂົາເຈົ້າ.
14 ວິນຍານທັງປວງເຫລົ່ານີ້ໄດ້ຈາກຊີ
ວິດມະຕະໄປແລ້ວ, ໝັ້ນຄົງໃນ [ກ]ຄວາມ
ຫວັງ ແຫ່ງ [ຂ]ການຟື້ນຄືນຊີວິດອັນຮຸ່ງ
ເຫລື້ອມ, ຜ່ານ [ຄ]ພຣະຄຸນຂອງພຣະເຈົ້າອົງ
ເປັນ [ງ]ພຣະບິດາ ແລະ [ຈ]ພຣະບຸດອົງດຽວທີ່
ຖືກກຳເນີດຂອງພຣະອົງ, ພຣະເຢຊູຄຣິດ.
15 ຂ້າພະເຈົ້າເຫັນວ່າເຂົາເຈົ້າເຕັມໄປ
ດ້ວຍ [ກ]ຄວາມຊື່ນຊົມ ແລະ ຄວາມຊື່ນຊົມ
ຍິນດີ, ແລະ ປີຕິຍິນດີຢູ່ນຳກັນ ເພາະວ່າ
ວັນແຫ່ງການປົດປ່ອຍຂອງເຂົາເຈົ້າມາ
ເຖິງແລ້ວ.
16 ເຂົາເຈົ້າໄດ້ມາຊຸມນຸມກັນຄອຍຖ້າ
ໃຫ້ພຣະບຸດຂອງພຣະເຈົ້າສະເດັດມາ
[ກ]ໂລກວິນຍານ, ເພື່ອປະກາດການໄຖ່ຂອງ
ເຂົາເຈົ້າຈາກ [ຂ]ສາຍທັດແຫ່ງຄວາມຕາຍ.
17 ຝຸ່ນດິນທີ່ຫລັບໄຫລຂອງເຂົາເຈົ້າຈະ
ຖືກ [ກ]ນຳກັບຄືນສູ່ໂຄງຮ່າງອັນສົມບູນຂອງ
ມັນ, [ຂ]ກະດູກສູ່ກະດູກຂອງມັນ, ແລະ ເອັນ
ກັບເນື້ອໜັງຢູ່ເທິງນັ້ນ, [ຄ]ວິນຍານ ແລະ
ຮ່າງກາຍຈະຮ່ວມເຂົ້າກັນເປັນໜຶ່ງບໍ່ມີວັນ
ແຍກອອກຈາກກັນອີກຕໍ່ໄປ, ເພື່ອວ່າມັນ
ຈະໄດ້ຮັບຄວາມສົມບູນແຫ່ງ [ງ]ຄວາມຊື່ນ
ຊົມ.
18 ໃນຂະນະທີ່ຝູງຊົນພວມຄອຍຖ້າ
ແລະ ເວົ້າລົມກັນຢູ່, ປີຕິຍິນດີໃນຊົ່ວໂມງ
ແຫ່ງການປົດປ່ອຍຂອງເຂົາເຈົ້າຈາກໂສ້
ແຫ່ງຄວາມຕາຍ, ພຣະບຸດຂອງພຣະເຈົ້າ
ໄດ້ມາປະກົດ, ໂດຍປະກາດ [ກ]ເສລີພາບ
ແກ່ຊະເລີຍຜູ້ຊື່ສັດຕະຫລອດມາ;
19 ແລະ ຢູ່ທີ່ນັ້ນພຣະອົງໄດ້ [ກ]ສັ່ງສອນ
[ຂ]ພຣະກິດຕິຄຸນອັນເປັນນິດໃຫ້ແກ່ເຂົາ
ເຈົ້າ, ຄຳສອນກ່ຽວກັບການຟື້ນຄືນຊີວິດ
ແລະ ການໄຖ່ມະນຸດຊາດຈາກ [ຄ]ການຕົກ,
ແລະ ຈາກບາບຂອງແຕ່ລະຄົນ ໂດຍມີ
ເງື່ອນໄຂຂອງ [ງ]ການກັບໃຈ.
20 ແຕ່ກັບ [ກ]ຄົນຊົ່ວ ພຣະອົງບໍ່ໄດ້ໄປ
ຫາ, ແລະ ໃນບັນດາຄົນອະທຳ ແລະ ຄົນ
ທີ່ບໍ່ກັບໃຈຜູ້ເຮັດໃຫ້ຕົນເອງ [ຂ]ເສື່ອມຄວາມ
ສັກສິດໃນຕອນທີ່ຢູ່ໃນເນື້ອໜັງ, ພຣະອົງບໍ່
ເອີ່ຍຄຳ.
21 ທັງຄົນກະບົດຜູ້ປະຕິເສດປະຈັກ
ພະຍານ ແລະ ຄຳເຕືອນຂອງສາດສະດາ
ໃນສະໄໝບູຮານກໍບໍ່ໄດ້ເຫັນທີ່ປະທັບຂອງ

---

12 ຂ ຄພ 6:13; 51:19; 76:51–53.
13 ກ ຄມພ ເສຍສະລະ, ການເສຍສະລະ.
ຂ ມທ 5:10–12.
14 ກ ອທ 12:4; ມຣນ 7:3, 40–44. ຄມພ ຫວັງ, ຄວາມຫວັງ.
ຂ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຄ ຄມພ ພຣະຄຸນ.
ງ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
ຈ ຄມພ ອົງດຽວທີ່ຖືກກຳເນີດ.
15 ກ ອຊຢ 51:11; ແອວ 40:12.
16 ກ ລກ 23:43; ແອວ 40:11–12. ຄມພ ທີ່ສຸຂະເສີມ.
ຂ ມມ 9:13.
17 ກ 2 ນຟ 9:10–13.
ຂ ອຊກ 37:1–14.
ຄ ຄພ 93:33–34.
ງ ຄມພ ຊື່ນຊົມ, ຄວາມຊື່ນຊົມ.
18 ກ ອຊຢ 61:1. ຄມພ ຄວາມລອດສຳລັບຄົນຕາຍ.
19 ກ ຄພ 76:72–74.
ຂ ຄມພ ພຣະກິດຕິຄຸນ.
ຄ ຄມພ ການຕົກຂອງອາດາມ ແລະ ເອວາ.
ງ ຄມພ ກັບໃຈ, ການກັບໃຈ.
20 ກ ແອວ 40:13–14. ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ; ນະລົກ.
ຂ 1 ນຟ 10:21.

ພຣະອົງ, ຫລື ໄດ້ຫລຽວເບິ່ງພຣະພັກຂອງພຣະອົງ.

22 ບ່ອນ ໃດ ທີ່ ຄົນ ເຫລົ່າ ນີ້ ອາ ໄສ ຢູ່, [ກ]ຄວາມມືດກໍຄອບງຳ, ແຕ່ໃນ ບັນດາຄົນຊອບທຳມີແຕ່ [ຂ]ສັນຕິສຸກ;

23 ແລະ ໄພ່ພົນຂອງພຣະເຈົ້າປິຕິຍິນດີໃນ [ກ]ການໄຖ່ຂອງເຂົາເຈົ້າ, ແລະ ໄດ້ [ຂ]ຄຸເຂົ່າລົງ ແລະ ຮັບຮູ້ພຣະບຸດຂອງພຣະເຈົ້າວ່າເປັນພຣະຜູ້ໄຖ່ ແລະ ພຣະຜູ້ປົດປ່ອຍຂອງເຂົາເຈົ້າຈາກຄວາມຕາຍ ແລະ [ຄ]ໂສ້ແຫ່ງນະລົກ.

24 ໃບ ໜ້າ ຂອງ ເຂົາ ເຈົ້າ ຮຸ່ງ ເຫລື້ອມ, ແລະ [ກ]ແສງຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າຢູ່ເທິງເຂົາເຈົ້າ, ແລະ ເຂົາເຈົ້າ [ຂ]ຮ້ອງເພງສັນລະເສີນແດ່ພຣະນາມອັນສັກສິດຂອງພຣະອົງ.

25 ຂ້າພະເຈົ້າປະຫລາດໃຈ, ເພາະວ່າຂ້າພະເຈົ້າເຂົ້າໃຈວ່າ ພຣະຜູ້ຊ່ອຍໃຫ້ລອດໄດ້ໃຊ້ເວລາປະມານສາມປີໃນການປະຕິບັດສາດສະໜາກິດຂອງພຣະອົງໃນບັນດາຊາວຢິວ ແລະ ຄົນທີ່ເປັນເຊື້ອສາຍອິດສະຣາເອນ, ໂດຍໄດ້ພະຍາຍາມສິດສອນພຣະກິດຕິຄຸນອັນເປັນນິດໃຫ້ແກ່ພວກເຂົາ ແລະ ເອີ້ນພວກເຂົາໃຫ້ມາສູ່ການກັບໃຈ;

26 ແລະ ເຖິງຢ່າງໃດກໍຕາມ, ທັງໆທີ່ວຽກງານອັນຍິ່ງໃຫຍ່ຂອງພຣະອົງ ແລະ ສິ່ງມະຫັດສະຈັນ, ແລະ ການປະກາດເຖິງຄວາມຈິງ, ໃນ [ກ]ອຳນາດ ແລະ ສິດອຳນາດອັນຍິ່ງໃຫຍ່, ແຕ່ກໍຍັງມີໜ້ອຍຄົນທີ່ເຊື່ອຟັງສຸລະສຽງຂອງພຣະອົງ, ແລະ ປິຕິຍິນດີໃນການປະທັບຢູ່ຂອງພຣະອົງ, ແລະ ຮັບເອົາຄວາມລອດຈາກພຣະຫັດຂອງພຣະອົງ.

27 ແຕ່ການປະຕິບັດສາດສະໜາກິດຂອງພຣະອົງໃນບັນດາຜູ້ຄົນທີ່ໄດ້ຕາຍໄປນັ້ນຖືກຈຳກັດເວລາ [ກ]ສັ້ນໆ ຊຶ່ງເປັນໄປໃນລະຫວ່າງການຄຶງ ແລະ ການຟື້ນຄືນພຣະຊົນຂອງພຣະອົງ;

28 ແລະ ຂ້າພະເຈົ້າໄດ້ປະຫລາດໃຈໃນຖ້ອຍຄຳຂອງເປໂຕ—ຊຶ່ງໃນນັ້ນ ເພິ່ນໄດ້ກ່າວວ່າພຣະບຸດຂອງພຣະເຈົ້າໄດ້ສັ່ງສອນເຫລົ່າວິນຍານຢູ່ໃນຄຸກ, ຜູ້ທີ່ຄັ້ງໜຶ່ງບໍ່ໄດ້ເຊື່ອຟັງ, ຕອນທີ່ຄວາມອົດກັ້ນຂອງພຣະເຈົ້າໄດ້ລໍຖ້າໃນວັນເວລາຂອງໂນອາ—ແລະ ເປັນໄປໄດ້ແນວໃດສຳລັບພຣະອົງທີ່ຈະສັ່ງສອນວິນຍານເຫລົ່ານັ້ນ ແລະ ເຮັດວຽກງານທີ່ຈຳເປັນໃນບັນດາພວກເຂົາໃນເວລາອັນສັ້ນໆນັ້ນ.

29 ແລະ ໃນ ຂະນະ ທີ່ ຂ້າ ພະ ເຈົ້າ ປະຫລາດໃຈຢູ່ນັ້ນ, ພຣະອົງໄດ້ເປີດຕາຂອງຂ້າພະເຈົ້າ, ແລະ ໄດ້ໃຫ້ [ກ]ຊີວິດຊີວາແກ່ຄວາມເຂົ້າໃຈຂອງຂ້າພະເຈົ້າ, ແລະ ຂ້າພະເຈົ້າໄດ້ເຫັນວ່າພຣະຜູ້ເປັນເຈົ້າບໍ່ໄດ້ໄປໂດຍພຣະອົງເອງໃນບັນດາຄົນຊົ່ວ ແລະ ຄົນບໍ່ເຊື່ອຟັງ ຜູ້ໄດ້ປະຕິເສດຄວາມຈິງ, ເພື່ອສິດສອນພວກເຂົາ;

30 ແຕ່ ຈົ່ງ ເບິ່ງ, ຈາກ ບັນ ດາ ຄົນ ຊອບທຳ, ພຣະອົງໄດ້ຈັດຕັ້ງກຳລັງຄົນຂອງພຣະອົງ ແລະ ໄດ້ກຳນົດຜູ້ສົ່ງຂ່າວ, ຫຸ້ມຫໍ່ດ້ວຍ [ກ]ອຳນາດ ແລະ ສິດອຳນາດ, ແລະ ໄດ້ມອບໝາຍເຂົາເຈົ້າໃຫ້ອອກໄປ ແລະ ນຳ

22 ກ ຄມພ ຄວາມມືດທາງວິນຍານ.
ຂ ຄມພ ສະຫງົບ, ຄວາມສະຫງົບ.
23 ກ ຄມພ ແຜນແຫ່ງການໄຖ່.
ຂ ຣມ 14:11; ມຊຢ 27:31.
ຄ 2 ນຟ 1:13; ແອວ 12:11.
24 ກ ພສສ 104:1–2; ອຊຢ 60:19; ພນມ 22:5; ຈສ—ປ 1:17. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
ຂ ຄມພ ຮ້ອງ.
26 ກ 1 ນຟ 11:28.
27 ກ ມຣກ 8:31.
29 ກ ຄພ 76:12.
30 ກ ລກ 24:49.

ຄວາມສະຫວ່າງແຫ່ງພຣະກິດຕິຄຸນໄປໃຫ້
ຄົນເຫລົ່ານັ້ນທີ່ຢູ່ໃນ [ຂ]ຄວາມມືດ, ແມ່ນແຕ່
ວິນຍານ [ຄ]ທັງປວງຂອງມະນຸດ; ແລະ ພຣະ
ກິດຕິຄຸນໄດ້ຖືກສັ່ງສອນໃຫ້ແກ່ຄົນຕາຍດັ່ງ
ນັ້ນ.
31 ແລະ ຜູ້ສົ່ງຂ່າວທີ່ເລືອກແລ້ວເຫລົ່າ
ນັ້ນໄດ້ອອກໄປ ປະກາດວັນອັນ [ກ]ຊົງໂປດ
ຂອງພຣະຜູ້ເປັນເຈົ້າ ແລະ ປະກາດ [ຂ]ເສ
ລີພາບແກ່ຊະເລີຍຜູ້ຖືກມັດໄວ້, ແມ່ນແຕ່
ໃຫ້ແກ່ຜູ້ຄົນທັງປວງທີ່ຈະກັບໃຈຈາກບາບ
ຂອງພວກເຂົາ ແລະ ຮັບເອົາພຣະກິດຕິ
ຄຸນ.
32 ພຣະກິດຕິຄຸນໄດ້ຖືກສັ່ງສອນດັ່ງນັ້ນ
ໃຫ້ແກ່ຜູ້ທີ່ໄດ້ [ກ]ຕາຍ ໃນບາບຂອງພວກ
ເຂົາ, ປາດສະຈາກ [ຂ]ຄວາມຮູ້ເລື່ອງຄວາມ
ຈິງ, ຫລື ໃນການລ່ວງລະເມີດ, ໂດຍໄດ້ປະ
ຕິເສດສາດສະດາ.
33 ຄົນ ເຫລົ່າ ນັ້ນ ໄດ້ ຖືກ ສິດ ສອນ ເຖິງ
[ກ]ສັດທາ ໃນ ພຣະ ເຈົ້າ, ການກັບ ໃຈ ຈາກ
ບາບ, [ຂ]ການບັບຕິສະມາແທນເພື່ອ [ຄ]ການ
ປົດບາບ, [ງ]ຂອງປະທານແຫ່ງພຣະວິນຍານ
ບໍລິສຸດໂດຍການວາງມື,
34 ແລະ ຫລັກທຳອື່ນໆຂອງພຣະກິດ
ຕິຄຸນທີ່ພວກເຂົາຈຳເປັນຕ້ອງຮູ້ ເພື່ອເຮັດ
ໃຫ້ຕົນເອງມີຄຸນຄ່າພໍທີ່ຈະໄດ້ຮັບ [ກ]ການ
ພິພາກສາຕາມມະນຸດໃນເນື້ອໜັງ, ແຕ່ດຳ
ເນີນຊີວິດຕາມພຣະເຈົ້າໃນວິນຍານ.
35 ແລະ ດັ່ງນັ້ນຈຶ່ງເປັນທີ່ຮູ້ຈັກໃນບັນດາ
ຄົນຕາຍ, ທັງຜູ້ນ້ອຍ ແລະ ຜູ້ໃຫຍ່, ຄົນບໍ່
ຊອບທຳ ແລະ ຄົນຊື່ສັດ, ວ່າການໄຖ່ໄດ້
ເກີດຂຶ້ນແລ້ວຜ່ານ [ກ]ການເສຍສະລະຂອງ
ພຣະບຸດຂອງພຣະເຈົ້າຢູ່ເທິງ [ຂ]ໄມ້ກາງ
ແຂນ.
36 ດັ່ງນັ້ນຈຶ່ງເປັນທີ່ຮູ້ຈັກກັນວ່າ ພຣະຜູ້
ໄຖ່ໄດ້ໃຊ້ເວລາຂອງພຣະອົງໃນຂະນະທີ່
ພຣະອົງຢູ່ໃນໂລກວິນຍານ, ໄດ້ແນະນຳ
ແລະ ຕຽມວິນຍານທີ່ຊື່ສັດຂອງ [ກ]ບັນດາ
ສາດສະດາຜູ້ໄດ້ເປັນພະຍານເຖິງພຣະອົງ
ໃນເນື້ອໜັງ;
37 ເພື່ອວ່າເຂົາເຈົ້າຈະໄດ້ນຳຂ່າວສານ
ແຫ່ງການໄຖ່ໄປຍັງຄົນຕາຍທັງປວງ, ໄປ
ຍັງຜູ້ທີ່ພຣະອົງໄປຫາເອງບໍ່ໄດ້, ເພາະ
[ກ]ການກະບົດ ແລະ ການລ່ວງລະເມີດຂອງ
ພວກເຂົາ, ເພື່ອວ່າຜ່ານການປະຕິບັດສາດ
ສະໜາກິດຂອງຜູ້ຮັບໃຊ້ຂອງພຣະອົງ,
ພວກເຂົາຈະໄດ້ຍິນພຣະຄຳຂອງພຣະອົງ.
38 ໃນບັນດາຜູ້ຄົນທີ່ຍິ່ງໃຫຍ່ ແລະ ມີ
ອຳນາດຊຶ່ງໄດ້ມາຮ່ວມການຊຸມນຸມອັນ
ໃຫຍ່ໂຕຂອງຄົນຊອບທຳມີພໍ່ [ກ]ອາດາມ,
ຜູ້ມີຊີວິດຢູ່ຕະຫລອດໄປ ແລະ ເປັນບິດາ
ຂອງຄົນທັງປວງ,
39 ແລະ ແມ່ [ກ]ເອວາຜູ້ປະເສີດຂອງພວກ
ເຮົາ, ພ້ອມດ້ວຍທິດາທີ່ຊື່ສັດຂອງນາງ
ຫລາຍຄົນຜູ້ໄດ້ມີຊີວິດຢູ່ໃນທຸກຍຸກທຸກສະ

30 ຂ ຄມພ ຄວາມມືດ ທາງວິນຍານ.
ຄ ຄພ 1:2.
31 ກ ອຊຍ 61:2; ລກ 4:17–19.
ຂ ຄມພ ເສລີພາບ.
32 ກ ຢຣ 8:21–24.
ຂ ຄພ 128:5. ຄມພ ຄວາມຮູ້.
33 ກ ຫຼຊ 1:4. ຄມພ ສັດທາ.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາແທນຄົນຕາຍ; ພິທີການ—ພິທີການກະທຳແທນ.
ຄ ຄມພ ປົດບາບ, ການປົດບາບ.
ງ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
34 ກ ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
35 ກ ແອວ 34:9–16. ຄມພ ເສຍສະລະ, ການເສຍສະລະ; ຊົດໃຊ້, ການຊົດໃຊ້.
ຂ ຄມພ ຄຶງ, ການຄຶງ; ໄມ້ກາງແຂນ.
36 ກ ຄພ 138:57.
37 ກ ຄພ 138:20. ຄມພ ກະບົດ, ການກະບົດ.
38 ກ ຄມພ ອາດາມ.
39 ກ ມຊ 4:26. ຄມພ ເອວາ.

ໃໝ ແລະ ໄດ້ນະມັດສະການພຣະເຈົ້າອົງ
ທ່ຽງແທ້ ແລະ ຊົງພຣະຊົນຢູ່.
40 [ກ]ອາເບັນ, ຄົນທຳອິດທີ່ໄດ້ [ຂ]ຖືກຂ້າ
ຍ້ອນຄວາມເຊື່ອ, ແລະ ນ້ອງຊາຍຂອງ
ລາວ [ຄ]ເຊດ, ໜຶ່ງໃນຜູ້ຄົນທີ່ຍິ່ງໃຫຍ່, ຜູ້ [ງ]ມີ
ລັກສະນະເໝືອນອາດາມ ບິດາຂອງລາວກໍ
ຢູ່ທີ່ນັ້ນ.
41 [ກ]ໂນອາ, ຜູ້ໄດ້ເຕືອນເລື່ອງນ້ຳຖ້ວມ;
[ຂ]ເຊມ, [ຄ]ມະຫາປະໂລຫິດຜູ້ຍິ່ງໃຫຍ່; [ງ]ອັບ
ຣາຮາມ, ບິດາຂອງຄົນ ຊື່ສັດ; [ຈ]ອີຊາກ,
[ສ]ຢາໂຄບ, ແລະ [ຊ]ໂມເຊ, ຜູ້ໃຫ້ກົດທີ່ຍິ່ງ
ໃຫຍ່ຂອງອິດສະຣາເອນ;
42 ແລະ [ກ]ເອຊາຢາ, ຜູ້ໄດ້ປະກາດໂດຍ
ການທຳນາຍວ່າພຣະຜູ້ໄຖ່ໄດ້ຖືກເຈີມເພື່ອ
ປອບໂຍນຫົວໃຈທີ່ຊອກຊ້ຳ, ເພື່ອປະກາດ
ເສລີພາບແກ່ [ຂ]ຊະເລີຍ, ແລະ ເປີດ [ຄ]ຄຸກ
ໃຫ້ແກ່ຜູ້ທີ່ຖືກມັດໄວ້, ກໍໄດ້ຢູ່ທີ່ນັ້ນຄືກັນ.
43 ຍິ່ງໄປກວ່ານັ້ນ, [ກ]ເອເຊກຽນຜູ້ໄດ້
ເຫັນຮ່ອມພູ [ຂ]ກະດູກແຫ້ງອັນກວ້າງໃຫຍ່
ໃນນິມິດ, ຊຶ່ງຈະຫໍ່ຫຸ້ມດ້ວຍເນື້ອໜັງ, ເພື່ອ
ອອກມາອີກໃນ [ຄ]ການຟື້ນຄືນຊີວິດຂອງ
ຄົນຕາຍ, ເປັນຈິດວິນຍານທີ່ມີຊີວິດ;
44 [ກ]ດານີເອນ, ຜູ້ໄດ້ເຫັນລ່ວງໜ້າ ແລະ
ບອກລ່ວງໜ້າເຖິງການສ້າງຕັ້ງ [ຂ]ອານາຈັກ
ຂອງພຣະເຈົ້າຂຶ້ນໃນຍຸກສຸດທ້າຍ, ໂດຍບໍ່
ມີວັນຖືກທຳລາຍ ຫລື ຖືກມອບໃຫ້ແກ່ຄົນ
ອື່ນອີກເລີຍ;
45 [ກ]ອີລາຍ, ຜູ້ໄດ້ຢູ່ກັບ ໂມເຊຢູ່ ເທິງພູ
ແຫ່ງ [ຂ]ການປ່ຽນສະພາບ;
46 ແລະ [ກ]ມາລາກີ, ສາດສະດາຜູ້ໄດ້
ເປັນພະຍານເຖິງການມາຂອງ [ຂ]ເອລີຢາ—
ຜູ້ທີ່ໂມໂຣໄນໄດ້ກ່າວເຖິງຄືກັນເມື່ອເພິ່ນ
ໄດ້ກ່າວກັບສາດສະດາ ໂຈເຊັບ ສະມິດ,
ໂດຍປະກາດວ່າ ເພິ່ນຈະມາກ່ອນການ
ເລີ່ມຕົ້ນຂອງ [ຄ]ມື້ອັນຍິ່ງໃຫຍ່ ແລະ ໜ້າ
ຢ້ານກົວຂອງພຣະຜູ້ເປັນເຈົ້າ—ກໍໄດ້ຢູ່ທີ່
ນັ້ນຄືກັນ.
47 ສາດສະດາເອລີຢາຕ້ອງປູກຄຳສັນ
ຍາທີ່ໄດ້ເຮັດໄວ້ກັບບັນພະບຸລຸດຂອງພວກ
ເຂົາໄວ້ໃນ [ກ]ໃຈຂອງລູກຫລານ,
48 ໂດຍບອກລ່ວງໜ້າເຖິງ [ກ]ວຽກງານ
ອັນຍິ່ງໃຫຍ່ທີ່ຈະຕ້ອງເຮັດ ໃນ [ຂ]ພຣະ
ວິຫານຂອງພຣະຜູ້ເປັນເຈົ້າໃນ [ຄ]ຍຸກສະ
ໄໝຂອງຄວາມສົມບູນແຫ່ງເວລາ, ເພື່ອ
ການໄຖ່ຄົນຕາຍ, ແລະ [ງ]ການຜະນຶກລູກໆ
ເຂົ້າກັບພໍ່ແມ່ຂອງພວກເຂົາ, ຖ້າບໍ່ດັ່ງນັ້ນ

40 ກ ຄມພ ອາເບັນ.
ຂ ຄມພ ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ.
ຄ ຄມພ ເຊດ.
ງ ປຖກ 5:3; ມຊ 6:10.
41 ກ ຄມພ ໂນອາ, ປີຕຸໃນພຣະຄຣິສຕະທຳຄຳພີ.
ຂ ຄມພ ເຊມ.
ຄ ຄມພ ມະຫາປະໂລຫິດ.
ງ ປຖກ 17:1–8. ຄມພ ອັບຣາຮາມ.
ຈ ປຖກ 21:1–5. ຄມພ ອີຊາກ.
ສ ປຖກ 35:9–15. ຄມພ ຢາໂຄບ, ລູກຊາຍຂອງອີຊາກ.
ຊ ຄມພ ໂມເຊ.
42 ກ ຄມພ ເອຊາຢາ.
ຂ ອຊຢ 61:1–2.
ຄ ຄມພ ນະລົກ.
43 ກ ຄມພ ເອເຊກຽນ.
ຂ ອຊກ 37:1–14.
ຄ ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
44 ກ ຄມພ ດານີເອນ.
ຂ ດນອ 2:44–45. ຄມພ ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ.
45 ກ ຄມພ ອີລາຍ.
ຂ ຄມພ ການປ່ຽນສະພາບ.
46 ກ ມລກ 4:5–6; ຈສ—ປ 1:36–39. ຄມພ ມາລາກີ.
ຂ ຄພ 110:13–15. ຄມພ ເອລີຢາ.
ຄ ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
47 ກ ຄພ 128:17.
48 ກ ຄມພ ຄວາມລອດສຳລັບຄົນຕາຍ.
ຂ ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.
ຄ ຄມພ ຍຸກສະໄໝ.
ງ ຄມພ ຄອບຄົວ—ຄອບຄົວນິລັນດອນ; ຜະນຶກ, ການຜະນຶກ.

ທັງແຜ່ນດິນ ໂລກຈະຖືກທຳລາຍໃຫ້ໝົດ
ສິ້ນໃນຕອນພຣະອົງສະເດັດມາ.
49 ຄົນເຫລົ່ານີ້ທັງປວງ ແລະ ຫລາຍໆ
ຄົນຕື່ມອີກ, ແມ່ນແຕ່ ກສາດສະດາຜູ້ໄດ້
ອາໄສໃນບັນດາຊາວນີໄຟ ແລະ ໄດ້ເປັນ
ພະຍານເຖິງການສະເດັດມາຂອງພຣະບຸດ
ຂອງພຣະເຈົ້າ, ໄດ້ປະປົນຢູ່ໃນການຊຸມ
ນຸມອັນໃຫຍ່ໂຕ ແລະ ໄດ້ຄອຍຖ້າການປົດ
ປ່ອຍຂອງເຂົາເຈົ້າ,
50 ເພາະເນື່ອງດ້ວຍຄົນຕາຍໄດ້ຄິດວ່າ
ການແຍກຂອງ ກວິນຍານ ແລະ ຮ່າງກາຍ
ຂອງພວກເຂົາເປັນເວລາດົນນານ ເປັນ
ຂການຈ່ອງຈຳ.
51 ຄົນເຫລົ່ານີ້ພຣະຜູ້ເປັນເຈົ້າໄດ້ສິດ
ສອນ, ແລະ ໄດ້ມອບ ກອຳນາດໃຫ້ເຂົາເຈົ້າ
ອອກມາ, ຫລັງຈາກການຟື້ນຄືນພຣະຊົນ
ຈາກຄວາມຕາຍຂອງພຣະອົງ, ເພື່ອເຂົ້າ
ໄປໃນອານາຈັກຂອງພຣະບິດາຂອງພຣະ
ອົງ, ຢູ່ທີ່ນັ້ນເພື່ອຮັບການສວມມົງກຸດດ້ວຍ
ຂຄວາມເປັນອະມະຕະ ແລະ ຄຊີວິດນິລັນ
ດອນ,
52 ແລະ ນັບຈາກນັ້ນເປັນຕົ້ນໄປພວກ
ເຂົາຈະທຳງານຕໍ່ໄປດັ່ງທີ່ສັນຍາໄວ້ໂດຍ
ພຣະຜູ້ເປັນເຈົ້າ, ແລະ ເປັນຜູ້ຮັບສ່ວນໃນ
ກພອນທັງປວງຊຶ່ງຖືກເກັບໄວ້ສຳລັບຄົນທີ່
ຮັກພຣະອົງ.
53 ສາດສະດາໂຈເຊັບ ສະມິດ, ແລະ ພໍ່
ຂອງຂ້າພະເຈົ້າ, ໄຮຣຳ ສະມິດ, ບຣິກຳ
ຢັງ, ຈອນ ເທເລີ, ວິວເຝີດ ວູດຣັບ, ແລະ
ວິນຍານທີ່ໂປດປານອື່ນໆ ຜູ້ທີ່ໄດ້ຖືກ ກຮັກ
ສາໄວ້ເພື່ອໃຫ້ອອກມາໃນຄວາມສົມບູນ
ແຫ່ງເວລາ ເພື່ອມີສ່ວນໃນ ຂການວາງຮາກ
ຖານຂອງວຽກງານອັນຍິ່ງໃຫຍ່ໃນຍຸກສຸດ
ທ້າຍ,
54 ລວມທັງການສ້າງພຣະວິຫານ ແລະ
ການປະຕິບັດພິທີການໃນນັ້ນເພື່ອການໄຖ່
ກຄົນຕາຍ, ກໍຢູ່ໃນໂລກວິນຍານຄືກັນ.
55 ຂ້າພະເຈົ້າໄດ້ສັງເກດເຫັນວ່າ ພວກ
ເພິ່ນໄດ້ຢູ່ໃນບັນດາ ກຜູ້ທີ່ສູງສັກ ແລະ ຍິ່ງ
ໃຫຍ່ ຜູ້ໄດ້ ຂຖືກເລືອກໄວ້ແຕ່ຕອນຕົ້ນໃຫ້
ເປັນຜູ້ປົກຄອງໃນສາດສະໜາຈັກຂອງ
ພຣະເຈົ້າ.
56 ແມ່ນແຕ່ກ່ອນພວກເພິ່ນເກີດ, ພວກ
ເພິ່ນ ພ້ອມກັບຄົນອື່ນໆຫລາຍຄົນ, ໄດ້
ຮັບບົດຮຽນທຳອິດຂອງພວກເພິ່ນຢູ່ໃນ
ໂລກວິນຍານ ແລະ ໄດ້ ກຕຽມພ້ອມແລ້ວ
ທີ່ຈະອອກມາໃນ ຂເວລາອັນເໝາະສົມ
ຂອງພຣະຜູ້ເປັນເຈົ້າ ເພື່ອເຮັດວຽກງານ
ໃນ ຄສວນອະງຸ່ນຂອງພຣະອົງ ເພື່ອຄວາມ
ລອດຂອງຈິດວິນຍານຂອງມະນຸດ.
57 ຂ້າພະເຈົ້າເຫັນວ່າ ກພວກແອວເດີທີ່
ຊື່ສັດຂອງຍຸກສະໄໝນີ້, ເມື່ອເຂົາເຈົ້າອອກ
ໄປຈາກຊີວິດມະຕະ, ໄດ້ສືບຕໍ່ ວຽກງານ
ຂອງເຂົາເຈົ້າໃນການສັ່ງສອນພຣະກິດຕິ
ຄຸນແຫ່ງການກັບໃຈ ແລະ ການໄຖ່, ຜ່ານ
ການເສຍສະລະຂອງພຣະບຸດອົງດຽວທີ່ຖື
ກຳເນີດຂອງພຣະເຈົ້າ, ໃນບັນດາຄົນທີ່ຢູ່
ໃນ ຂຄວາມມືດ ແລະ ພາຍໃຕ້ຄວາມເປັນ

49 ກ ຣລມ 8:19–22.
50 ກ ຄມພ ວິນຍານ.
ຂ ຄພ 45:17.
51 ກ 1 ກຣທ 6:14;
ແອວ 40:19–21.
ຂ ຄມພ ອະມະຕະ, ຄວາມ
ເປັນອະມະຕະ.
ຄ ຄພ 29:43.
ຄມພ ຊີວິດນິລັນດອນ.
52 ກ ອຊຢ 64:4; 1 ກຣທ 2:9;
ຄພ 14:7.
53 ກ ຄມພ ແຕ່ງຕັ້ງລ່ວງໜ້າ,
ການແຕ່ງຕັ້ງລ່ວງໜ້າ.
ຂ ຄພ 64:33.
54 ກ ຄມພ ພິທີການ—ພິທີ
ການກະທຳແທນ.
55 ກ ອຣຮ 3:22–24.
ຂ ຄມພ ແຕ່ງຕັ້ງລ່ວງໜ້າ,
ການແຕ່ງຕັ້ງລ່ວງໜ້າ.
56 ກ ໂຢບ 38:4–7;
ແອວ 13:3–7.
ຂ ກຈກ 17:24–27.
ຄ ຢຄ 6:2–3.
ຄມພ ສວນອະງຸ່ນຂອງ
ພຣະຜູ້ເປັນເຈົ້າ.
57 ກ ຄມພ ແອວເດີ.
ຂ ຄມພ ນະລົກ.

ທາດຂອງບາບໃນໂລກວິນຍານອັນກວ້າງ
ໃຫຍ່ໄພສານຂອງຄົນຕາຍ.
58 ຄົນຕາຍຜູ້ທີ່ກັບໃຈຈະ [ກ]ຖືກໄຖ່, ໂດຍ
ການເຊື່ອຟັງຕໍ່ [ຂ]ພິທີການຂອງບ້ານຂອງ
ພຣະເຈົ້າ,
59 ແລະ ຫລັງ ຈາກ ພວກ ເຂົາ ໄດ້ ຮັບ
ໂທດຂອງການລ່ວງລະເມີດຂອງພວກເຂົາ
ແລ້ວ, ແລະ ໄດ້ຖືກ [ກ]ຊຳລະໃຫ້ສະອາດ
ແລ້ວ, ຈະໄດ້ຮັບລາງວັນຕາມ [ຂ]ວຽກງານ
ຂອງພວກເຂົາ, ເພາະວ່າພວກເຂົາເປັນທາ
ຍາດແຫ່ງຄວາມລອດ.
60 ພາບນິມິດກ່ຽວກັບການໄຖ່ຄົນຕາຍ
ໄດ້ເປີດເຜີຍແກ່ຂ້າພະເຈົ້າດັ່ງນັ້ນ, ແລະ
ຂ້າພະເຈົ້າຂໍກ່າວເປັນພະຍານ, ແລະ ຂ້າ
ພະເຈົ້າຮູ້ວ່າບັນທຶກນີ້ເປັນ [ກ]ຄວາມຈິງ,
ຜ່ານພອນຂອງພຣະຜູ້ເປັນເຈົ້າ ແລະ ພຣະ
ຜູ້ຊ່ວຍໃຫ້ລອດ, ພຣະເຢຊູຄຣິດ, ແມ່ນ
ເປັນດັ່ງນັ້ນ. ອາແມນ.

58 *ກ* ຄມພ ໄຖ່, ການໄຖ່, ຖືກໄຖ່.
*ຂ* ຄມພ ພິທີການ.
59 *ກ* ແອວ 5:17–22.
ຄມພ ອະໄພ, ໃຫ້ອະໄພ.
*ຂ* ຄມພ ວຽກງານ.
60 *ກ* ຄມພ ຈິງ, ຄວາມຈິງ.

# ຂໍ້ປະກາດຢ່າງເປັນທາງການ 1

*ພຣະຄຣິສຕະທຳຄຳພີ ແລະ ພຣະຄຳພີມໍມອນ ສິດສອນວ່າ ລະບົບຜົວດຽວເມຍດຽວ ເປັນມາດຕະຖານຂອງພຣະເຈົ້າ ສຳລັບການແຕ່ງງານ ຍົກເວັ້ນແຕ່ ພຣະອົງປະກາດອີກຢ່າງໜຶ່ງ (ເບິ່ງ 2 ຊາມູເອນ 12:7–8 ແລະ ຢາໂຄບ 2:27, 30). ຕໍ່ໄປນີ້ ຄືການເປີດເຜີຍຕໍ່ໂຈເຊັບ ສະມິດ, ເລື່ອງການແຕ່ງເມຍຫລາຍຄົນ ຊຶ່ງໄດ້ປະຕິບັດກັນ ໃນບັນດາສະມາຊິກຂອງສາດສະໜາຈັກ ໃນຕົ້ນປີ 1840 (ເບິ່ງ ພາກທີ 132). ຈາກປີ 1860 ເຖິງປີ 1880, ຝ່າຍລັດຖະບານຂອງສະຫະລັດ ອາເມຣິກາ ໄດ້ຜ່ານກົດທີ່ລະບຸວ່າ ການແຕ່ງເມຍຫລາຍຄົນ ເປັນສິ່ງຜິດກົດໝາຍ. ກົດເຫລົ່ານີ້ ໃນທີ່ສຸດກໍຖືກສະໜັບສະໜູນໂດຍສານສູງສຸດຂອງສະຫະລັດ. ຫລັງຈາກໄດ້ຮັບການເປີດເຜີຍ, ປະທານວິວເຝີດ ວູດດຣັບ ໄດ້ລະບຸຄຳຖະແຫລງນະໂຍບາຍດັ່ງຕໍ່ໄປນີ້, ຊຶ່ງໄດ້ຖືກຮັບຮູ້ໂດຍສາດສະໜາຈັກ ວ່າເປັນຄຳສັ່ງຢ່າງເປັນທາງການ ແລະ ມີອຳນາດ ໃນວັນທີ 6 ເດືອນຕຸລາ, 1890. ສິ່ງນີ້ໄດ້ເຮັດໃຫ້ການແຕ່ງເມຍຫລາຍຄົນ ສິ້ນສຸດລົງ ໃນສາດສະໜາຈັກ.*

ເຖິງຜູ້ທີ່ກ່ຽວຂ້ອງ:

ລາຍງານຂ່າວຈາກເມືອງເຊົາເລັກ, ເພື່ອຈຸດປະສົງທາງການເມືອງ, ຊຶ່ງໄດ້ພິມແຈກຢາຍທົ່ວ, ມີເນື້ອຄວາມຄະນະກຳມະການຢູທາ, ໃນການລາຍງານຂອງເຂົາເຈົ້າເຖິງລັດຖະມົນຕີກະຊວງພາຍໃນເມື່ອບໍ່ດົນມານີ້, ອ້າງວ່າການແຕ່ງເມຍຫລາຍຄົນຍັງປະຕິບັດກັນຢູ່ ແລະ ວ່າມີການແຕ່ງງານເຊັ່ນນັ້ນຈຳນວນສີ່ສິບຄົນ ຫລື ຫລາຍກວ່ານັ້ນຢູ່ໃນລັດຢູທານັບຕັ້ງແຕ່ເດືອນມິຖຸນາທີ່ຜ່ານມາ ຫລື ລະຫວ່າງປີທີ່ຜ່ານມາ, ພ້ອມນີ້ວ່າຢູ່ໃນຄຳປາໄສຕໍ່ໜ້າສາທາລະນະຊົນ ຜູ້ນຳຂອງສາດສະໜາຈັກໄດ້ສິດສອນ, ໄດ້ສະໜັບສະໜູນ ແລະ ຊຸກຍູ້ໃຫ້ປະຕິບັດການມີເມຍຫລາຍຄົນຕໍ່ໄປ—

ສະນັ້ນ, ຂ້າພະເຈົ້າ, ໃນຖານະທີ່ເປັນປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ໃນຕອນນີ້, ໃນຄວາມຈິງຈັງທີ່ສຸດ, ຂໍປະກາດວ່າ ຂໍ້ກ່າວຫາເຫລົ່ານີ້ເປັນຄວາມເທັດ. ພວກເຮົາບໍ່ໄດ້ສິດສອນເລື່ອງການມີເມຍຫລາຍຄົນ ຫລື ການແຕ່ງເມຍຫລາຍຄົນ, ຫລື ອະນຸຍາດໃຫ້ຄົນໃດຄົນໜຶ່ງປະຕິບັດເຊັ່ນນັ້ນ, ແລະ ຂ້າພະເຈົ້າຂໍປະຕິເສດວ່າບໍ່ມີສີ່ສິບຄົນ ຫລື ຈັກຄົນທີ່ໄດ້ແຕ່ງເມຍຫລາຍຄົນໃນໄລຍະເວລານັ້ນຢູ່ໃນພຣະວິຫານຂອງພວກເຮົາ ຫລື ໃນສະຖານທີ່ອື່ນໃດກໍຕາມໃນຂົງເຂດນີ້.

ມີກໍລະນີໜຶ່ງໄດ້ຖືກລາຍງານວ່າ ມີບາງຄົນໄດ້ຖືກກ່າວຫາວ່າໄດ້ແຕ່ງງານຢູ່ໃນບ້ານຮັບຂອງປະທານສັກສິດ, ໃນເມືອງເຊົາເລັກ, ໃນລະດູໃບໄມ້ປົ່ງຂອງປີ 1889, ແຕ່ຂ້າພະເຈົ້າບໍ່ສາມາດຮູ້ໄດ້ວ່າ ແມ່ນໃຜເປັນຜູ້ປະຕິບັດພິທີ; ສິ່ງໃດທີ່ໄດ້ເຮັດໄປໃນເລື່ອງນີ້ແມ່ນປາດສະຈາກຄວາມຮູ້ເຫັນຂອງຂ້າພະເຈົ້າ. ເນື່ອງຈາກຄຳກ່າວຫາກ່ຽວກັບເລື່ອງນີ້, ບ້ານຮັບຂອງປະທານສັກສິດຈຶ່ງຖືກຮື້ຖອນ, ຕາມຄຳແນະນຳຂອງຂ້າພະເຈົ້າ.

ຕາບໃດທີ່ສະພາແຫ່ງລັດຍັງອອກຄຳສັ່ງຫ້າມການແຕ່ງເມຍຫລາຍຄົນ, ຊຶ່ງກົດໝາຍເຫລົ່ານັ້ນໄດ້ຖືກລະບຸໂດຍສານສູງສຸດ, ຂ້າພະເຈົ້າຈຶ່ງປະກາດຄວາມເຈດຕະນາຂອງຂ້າພະເຈົ້າໃນຕອນນີ້ທີ່ຈະຍິນຍອມຕໍ່ກົດໝາຍເຫລົ່ານັ້ນ, ແລະ ຈະໃຊ້ອິດທິພົນຂອງຂ້າພະເຈົ້າທີ່ມີຕໍ່ສະມາຊິກຂອງສາດສະໜາຈັກຊຶ່ງຂ້າພະເຈົ້າຄວບຄຸມຢູ່ ເພື່ອໃຫ້ເຂົາເຈົ້າເຮັດເຊັ່ນດຽວກັນ.

ບໍ່ມີຂໍ້ຄວາມໃດໃນຄຳສອນຂອງຂ້າພະເຈົ້າຕໍ່ສາດສະໜາຈັກ ຫລື ໃນຄຳສອນຂອງຜູ້ຮ່ວມງານຂອງຂ້າພະເຈົ້າ, ໃນໄລຍະເວລາທີ່ລະບຸໄວ້, ຊຶ່ງຈະຕີຄວາມໝາຍໄດ້ຢ່າງມີເຫດຜົນເພື່ອສົ່ງເສີມ ຫລື ສະໜັບສະໜູນການມີເມຍຫລາຍຄົນ; ແລະ ເມື່ອແອວເດີຄົນໃດຂອງສາດສະໜາຈັກໃຊ້ພາສາຊຶ່ງເບິ່ງຄືວ່າເປັນການກ່າວເຖິງຄຳສອນໃດໆເຊັ່ນນັ້ນ, ເຂົາກໍໄດ້ຖືກຕຳນິທັນທີ. ແລະ ບັດນີ້ຂ້າພະເຈົ້າຂໍປະກາດຕໍ່ສາທາລະນະຊົນວ່າ ຄຳແນະນຳຕໍ່ໄພ່ພົນຍຸກສຸດທ້າຍຄືໃຫ້ຫລີກເວັ້ນຈາກການເຂົ້າພິທີແຕ່ງງານໃດໆທີ່ຖືກສັ່ງຫ້າມໂດຍກົດໝາຍຂອງບ້ານເມືອງ.

ວິວເຝີດ ວູດຣັບ<br>
ປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດ<br>
ແຫ່ງໄພ່ພົນຍຸກສຸດທ້າຍ.

ປະທານໂລເຣັນໂຊ ສະໂນ ໄດ້ກ່າວໄວ້ດັ່ງນີ້:

"ຂ້າພະເຈົ້າຂໍສະເໜີວ່າ, ໂດຍການຮັບຮູ້ ວິວເຝີດ ວູດຣັບ ເປັນປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ແລະ ເປັນມະນຸດພຽງຄົນດຽວຢູ່ເທິງແຜ່ນດິນໂລກໃນປະຈຸບັນນີ້ທີ່ຖືຂໍກະແຈຂອງພິທີການຜະນຶກ, ພວກເຮົາຖືວ່າເພິ່ນມີສິດອຳນາດເຕັມ ທີ່ໂດຍອີງຕາມຕຳແໜ່ງຂອງເພິ່ນທີ່ຈະອອກຄຳຖະແຫລງນະໂຍບາຍຊຶ່ງໄດ້ອ່ານໃຫ້ພວກເຮົາຟັງແລ້ວ, ແລະ ຊຶ່ງລົງວັນທີ 24 ເດືອນກັນຍາ, 1890, ແລະ ວ່າໃນຖານະສາດສະໜາຈັກທີ່ມາຊຸມນຸມກັນໃນກອງປະຊຸມໃຫຍ່ສາມັນ, ພວກເຮົາຍອມຮັບຂໍ້ປະກາດ

ຂອງເພິ່ນກ່ຽວກັບ ການແຕ່ງເມຍຫລາຍຄົນວ່າເປັນຄຳສັ່ງຢ່າງເປັນທາງການ ແລະ ມີອຳນາດບັງຄັບ.”

ເມືອງເຊົາເລັກ, ລັດຢູທາ, ວັນທີ 6 ເດືອນຕຸລາ, 1890.

## ຂໍ້ຄວາມທີ່ຂັດເລືອກອອກມາຈາກຄຳປາໄສສາມບົດ ຊຶ່ງກ່າວໂດຍ ປະທານວິວເຝີດ ວູດຣັບ ກ່ຽວກັບຄຳຖະແຫລງນະໂຍບາຍ

ພຣະຜູ້ເປັນເຈົ້າຈະບໍ່ມີວັນອະນຸຍາດໃຫ້ຂ້າພະເຈົ້າ ຫລື ຊາຍຄົນໃດກໍຕາມຊຶ່ງດຳລົງຖານະປະທານຂອງສາດສະໜາຈັກນີ້ນຳພາພວກທ່ານໄປຜິດທາງ. ມັນບໍ່ໄດ້ຢູ່ໃນແຜນ. ມັນບໍ່ໄດ້ເປັນພຣະປະສົງຂອງພຣະເຈົ້າ. ຖ້າຫາກຂ້າພະເຈົ້າພະຍາຍາມຈະເຮັດເຊັ່ນນັ້ນ, ພຣະຜູ້ເປັນເຈົ້າຈະຍ້າຍຂ້າພະເຈົ້າອອກຈາກຕຳແໜ່ງຂອງຂ້າພະເຈົ້າ, ແລະ ພຣະອົງຈະເຮັດເຊັ່ນນັ້ນກັບຊາຍຄົນໃດກໍຕາມທີ່ພະຍາຍາມນຳພາລູກຫລານມະນຸດ ໄປຜິດທາງຈາກການຮັບການເປີດເຜີຍຈາກພຣະເຈົ້າ ແລະ ຈາກໜ້າທີ່ຂອງເຂົາເຈົ້າ. (ກອງປະຊຸມໃຫຍ່ສາມັນເຄິ່ງປີຂອງສາດສະໜາຈັກ, ວັນຈັນ, ວັນທີ 6 ເດືອນຕຸລາ, 1890, ເມືອງເຊົາເລັກ, ລັດຢູທາ. ລາຍງານໃນ *Deseret Evening News,* ວັນທີ 11 ເດືອນຕຸລາ, 1890, ໜ້າທີ 2.)

ບໍ່ສຳຄັນວ່າໃຜມີຊີວິດຢູ່ ຫລື ໃຜຕາຍ, ຫລື ຜູ້ໃດຖືກເອີ້ນໃຫ້ນຳພາສາດສະໜາຈັກນີ້, ເຂົາເຈົ້າຕ້ອງນຳພາມັນໂດຍການດົນໃຈຈາກພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່. ຖ້າຫາກເຂົາເຈົ້າບໍ່ເຮັດໃນວິທີນີ້, ພວກເຂົາຈະບໍ່ສາມາດເຮັດໄດ້ເລີຍ. . . .

ຂ້າພະເຈົ້າໄດ້ຮັບການເປີດເຜີຍບາງເລື່ອງເມື່ອບໍ່ດົນມານີ້, ແລະ ສຳຄັນຫລາຍຕໍ່ຂ້າພະເຈົ້າ, ແລະ ຂ້າພະເຈົ້າຈະບອກພວກທ່ານເຖິງສິ່ງທີ່ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າ. ຂໍໃຫ້ຂ້າພະເຈົ້ານຳຄວາມຄິດຂອງພວກທ່ານມາສູ່ສິ່ງທີ່ເອີ້ນກັນວ່າຄຳຖະແຫລງນະໂຍບາຍ. . . .

ພຣະຜູ້ເປັນເຈົ້າໄດ້ບອກໃຫ້ຂ້າພະເຈົ້າຖາມໄພ່ພົນຍຸກສຸດທ້າຍຄຳຖາມໜຶ່ງ, ແລະ ພຣະອົງໄດ້ບອກຂ້າພະເຈົ້າອີກວ່າ ຖ້າຫາກເຂົາເຈົ້າຈະຟັງສິ່ງທີ່ຂ້າພະເຈົ້າໄດ້ກ່າວກັບເຂົາເຈົ້າ ແລະ ຕອບຄຳຖາມທີ່ຖາມເຂົາເຈົ້າ, ໂດຍພຣະວິນຍານ ແລະ ອຳນາດຂອງພຣະເຈົ້າ, ເຂົາເຈົ້າທຸກຄົນຈະຕອບຄືກັນ, ແລະ ເຂົາເຈົ້າທຸກຄົນຈະເຊື່ອຄືກັນກ່ຽວກັບເລື່ອງນີ້.

ນີ້ຄືຄຳຖາມ: ວິທີທາງໃດທີ່ສະຫລາດທີ່ສຸດສຳລັບໄພ່ພົນຍຸກສຸດທ້າຍທີ່ຈະດຳເນີນຕໍ່ໄປ—ພະຍາຍາມປະຕິບັດການແຕ່ງເມຍຫລາຍຄົນຕໍ່ໄປ, ໂດຍມີກົດໝາຍຂອງປະເທດຊາດຄັດຄ້ານເລື່ອງນີ້ ແລະ ມີການຕໍ່ຕ້ານຈາກປະຊາຊົນຫົກສິບລ້ານຄົນ, ແລະ ແລກດ້ວຍການຖືກຍຶດ ແລະ ສູນເສຍພຣະວິຫານທັງໝົດ, ແລະ ຢຸດເຮັດພິທີການທັງປວງຢູ່ໃນນັ້ນ, ທັງສຳລັບຄົນເປັນ ແລະ ຄົນຕາຍ, ແລະ ການຄຸມຂັງຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງ ແລະ ຫົວໜ້າຄອບຄົວໃນສາດສະໜາຈັກ, ແລະ ການຖືກຍຶດຊັບສິນສ່ວນຕົວຂອງຜູ້ຄົນ (ທັງໝົດທີ່ກ່າວມານັ້ນຈະເຮັດໃຫ້ຢຸດການແຕ່ງເມຍຫລາຍຄົນ); ຫລື, ຫລັງຈາກສິ່ງທີ່ພວກເຮົາໄດ້ເຮັດໄປ ແລະ ໄດ້ຮັບທຸກທໍລະມານໂດຍການຍຶດໝັ້ນຕໍ່ຫລັກທຳນີ້ ພວກເຮົາຈະເຊົາປະຕິບັດ ແລະ ຍິນຍອມຕໍ່ກົດໝາຍ, ແລະ ຜ່ານການກະທຳເຊັ່ນນັ້ນ ຈະປ່ອຍໃຫ້ສາດສະດາ, ອັກຄະສາວົກ ແລະ ພໍ່ຢູ່ບ້ານ, ເພື່ອວ່າເຂົາເຈົ້າຈະສາມາດແນະນຳຜູ້ຄົນ ແລະ ເອົາໃຈໃສ່ຕໍ່ໜ້າທີ່ຂອງສາດສະໜາຈັກ, ແລະ ປະພຣະວິຫານຢູ່ໃນມືຂອງໄພ່ພົນຂອງພຣະເຈົ້າ, ເພື່ອວ່າເຂົາເຈົ້າຈະສາມາດເອົາໃຈໃສ່ຕໍ່ພິທີການຂອງພຣະກິດຕິຄຸນ, ທັງຄົນເປັນ ແລະ ຄົນຕາຍ?

ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ຂ້າພະເຈົ້າເຫັນພາບນິມິດ ແລະ ການເປີດເຜີຍເຖິງສິ່ງທີ່ຈະເກີດຂຶ້ນຢ່າງແນ່ນອນຖ້າຫາກພວກເຮົາບໍ່ເຊົາການປະຕິບັດນີ້. ຖ້າຫາພວກເຮົາບໍ່ເຊົາປະຕິບັດ, ພວກທ່ານບໍ່ຈຳ

ເປັນຕ້ອງມີ . . . ຊາຍຄົນໃດເລີຍໃນພຣະວິຫານນີ້ທີ່ໂລແກນ; ເພາະວ່າພິທີການທັງໝົດຈະຖືກເຮັດໃຫ້ຢຸດຕະຫລອດທົ່ວແຜ່ນດິນຊີໂອນ. ຄວາມສັບສົນຈະປົກຄອງຕະຫລອດທົ່ວອິດສະຣາເອນ, ແລະ ຜູ້ຊາຍຢ່າງຫລວງຫລາຍຈະຖືກຄຸມຂັງ. ຄວາມເດືອດຮ້ອນນີ້ຈະມາເຖິງສາດສະໜາຈັກທັງໝົດ, ແລະ ພວກເຮົາຈະຖືກບັງຄັບໃຫ້ເຊົາການປະຕິບັດ. ບັດນີ້, ຄຳຖາມຄື, ບໍ່ວ່າມັນຈະຖືກຢຸດຕິໃນລັກສະນະນີ້, ຫລື ໃນວິທີທີ່ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ປະຈັກແກ່ພວກເຮົາ, ແລະ ປ່ອຍໃຫ້ສາດສະດາ ແລະ ອັກຄະສາວົກ ແລະ ພໍ່ຂອງພວກເຮົາເປັນອິດສະລະ, ແລະ ພຣະວິຫານຢູ່ໃນມືຂອງຜູ້ຄົນ, ເພື່ອວ່າຄົນຕາຍຈະໄດ້ຮັບການໄຖ່. ຈຳນວນຫລວງຫລາຍໄດ້ຮັບການປົດປ່ອຍແລ້ວຈາກຄຸກຢູ່ໃນໂລກວິນຍານໂດຍຜູ້ຄົນເຫລົ່ານີ້, ແລະ ວຽກງານຄວນຈະດຳເນີນຕໍ່ໄປ ຫລື ຢຸດ? ນີ້ຄືຄຳຖາມທີ່ຂ້າພະເຈົ້າວາງໄວ້ຕໍ່ໜ້າໄພ່ພົນຍຸກສຸດທ້າຍ. ພວກທ່ານຕ້ອງຕັດສິນດ້ວຍຕົວພວກທ່ານເອງ. ຂ້າພະເຈົ້າຈະບໍ່ຕອບຄຳຖາມນີ້; ແຕ່ຂ້າພະເຈົ້າກ່າວກັບພວກທ່ານວ່າ ນັ້ນຄືສະພາບທີ່ພວກເຮົາໃນຖານະເປັນຜູ້ຄົນກຸ່ມໜຶ່ງຈະຕ້ອງຕົກຢູ່ຖ້າຫາກພວກເຮົາບໍ່ໄດ້ເລືອກວິທີທາງທີ່ພວກເຮົາໄດ້ເລືອກ.

. . . ຂ້າພະເຈົ້າໄດ້ເຫັນຢ່າງແນ່ນອນສິ່ງທີ່ຈະເກີດຂຶ້ນຖ້າຫາກບໍ່ໄດ້ເຮັດບາງສິ່ງບາງຢ່າງ. ຂ້າພະເຈົ້າມີຄວາມຮູ້ສຶກເຊັ່ນນີ້ມາເປັນເວລາດົນນານ. ແຕ່ຂ້າພະເຈົ້າຢາກກ່າວດັ່ງນີ້: ຂ້າພະເຈົ້າຈະປ່ອຍໃຫ້ພຣະວິຫານທັງໝົດຫລຸດມືຂອງພວກເຮົາໄປ; ຂ້າພະເຈົ້າເອງຈະເຂົ້າໄປຢູ່ໃນຄຸກ, ແລະ ໃຫ້ຊາຍຄົນອື່ນໆທຸກຄົນໄປບ່ອນນັ້ນ, ຖ້າຫາກພຣະເຈົ້າແຫ່ງສະຫວັນບໍ່ໄດ້ບັນຊາຂ້າພະເຈົ້າໃຫ້ເຮັດສິ່ງທີ່ຂ້າພະເຈົ້າໄດ້ເຮັດໄປນັ້ນ; ແລະ ເມື່ອຊົ່ວໂມງນັ້ນມາເຖິງ ຊຶ່ງຂ້າພະເຈົ້າໄດ້ຮັບບັນຊາໃຫ້ເຮັດການນັ້ນ ທຸກຢ່າງແຈ່ມແຈ້ງຕໍ່ຂ້າພະເຈົ້າ. ຂ້າພະເຈົ້າໄດ້ເຂົ້າຫາພຣະຜູ້ເປັນເຈົ້າ, ແລະ ຂ້າພະເຈົ້າໄດ້ຂຽນສິ່ງທີ່ພຣະຜູ້ເປັນເຈົ້າບອກໃຫ້ຂ້າພະເຈົ້າຂຽນ. . . .

ຂ້າພະເຈົ້າຝາກເລື່ອງນີ້ໄວ້ກັບພວກທ່ານເພື່ອໃຫ້ໄຕ່ຕອງ ແລະ ພິຈາລະນາ. ພຣະຜູ້ເປັນເຈົ້າໄດ້ເຮັດວຽກງານຢູ່ກັບພວກເຮົາ. (ກອງປະຊຸມສະເຕກແຄສ໌, ໂລແກນ, ລັດຢູທາ, ວັນອາທິດ, ວັນທີ 1 ເດືອນພະຈິກ, 1891. ລາຍງານໃນ *Deseret Weekly,* ວັນທີ 14 ເດືອນພະຈິກ, 1891.)

ບັດນີ້ຂ້າພະເຈົ້າຈະບອກພວກທ່ານເຖິງສິ່ງທີ່ຖືກສະແດງໃຫ້ປະຈັກແກ່ຂ້າພະເຈົ້າ ແລະ ສິ່ງທີ່ພຣະບຸດຂອງພຣະເຈົ້າໄດ້ກະທຳໃນເລື່ອງນີ້. . . . ທຸກສິ່ງທັງປວງເຫລົ່ານີ້ຈະເກີດຂຶ້ນ, ດັ່ງທີ່ພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ ຊົງພຣະຊົນຢູ່, ຖ້າຫາກຄຳຖະແຫລງນະໂຍບາຍບໍ່ໄດ້ຖືກມອບໃຫ້. ສະນັ້ນ, ພຣະບຸດຂອງພຣະເຈົ້າຈຶ່ງຮູ້ສຶກໂນ້ມອ່ຽງທີ່ຈະສະເໜີສິ່ງນີ້ຕໍ່ສາດສະໜາຈັກ ແລະ ຕໍ່ໂລກເພື່ອຈຸດປະສົງໃນຄວາມຄິດຂອງພຣະອົງເອງ. ພຣະຜູ້ເປັນເຈົ້າໄດ້ອອກຄຳສັ່ງໃຫ້ສ້າງຕັ້ງຊີໂອນ. ພຣະອົງໄດ້ອອກຄຳສັ່ງໃຫ້ສ້າງພຣະວິຫານແຫ່ງນີ້ໃຫ້ສຳເລັດ. ພຣະອົງໄດ້ອອກຄຳສັ່ງວ່າຄວາມລອດຂອງຄົນເປັນ ແລະ ຄົນຕາຍຄວນຈະຖືກມອບໃຫ້ໃນຫ່ອມພູເຫລົ່ານີ້. ແລະ ພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ໄດ້ອອກຄຳສັ່ງວ່າມານຈະບໍ່ມາຂັດຂວາງ. ຖ້າຫາກພວກທ່ານສາມາດເຂົ້າໃຈມັນ, ນັ້ນຄືຂໍກະແຈສູ່ສິ່ງນີ້. (ຈາກຄຳປາໄສໃນພາກທີຫົກຂອງການອຸທິດພຣະວິຫານເຊົາເລັກ, ເດືອນເມສາ 1893. ເອກະສານພິມດີດຂອງພິທີການອຸທິດ, ເອກະສານເກົ່າທີ່ສຳຄັນ, ພະແນກປະຫວັດສາດຂອງສາດສະໜາຈັກ, ເມືອງເຊົາເລັກ, ລັດຢູທາ.)

# ຂໍ້ປະກາດຢ່າງເປັນທາງການ 2

*ພຣະຄຳພີມໍມອນ ສິດສອນວ່າ "ທຸກຄົນເທົ່າທຽມກັນໝົດສຳລັບພຣະເຈົ້າ," ລວມທັງຄົນ "ດຳ ແລະ ຂາວ, ຂ້າທາດ ແລະ ຜູ້ເປັນອິດສະລະ, ຊາຍ ແລະ ຍິງ" (2 ນີໄຟ 26:33). ຕະຫລອດທົ່ວປະຫວັດສາດຂອງສາດສະໜາຈັກ, ຜູ້ຄົນທຸກເຊື້ອຊາດ ແລະ ຊົນເຜົ່າ ໃນ*

*ຫລາຍປະເທດ ໄດ້ຮັບບັບຕິສະມາ ແລະ ໄດ້ດໍາລົງຊີວິດເປັນສະມາຊິກທີ່ຊື່ສັດຂອງສາດສະໜາຈັກ. ໃນວັນເວລາຂອງໂຈເຊັບ ສະມິດ, ມີຜູ້ຊາຍຄົນອາຟຣິກາສອງສາມຄົນ ທີ່ເປັນສະມາຊິກຂອງສາດສະໜາຈັກ ໄດ້ຖືກແຕ່ງຕັ້ງສູ່ຖານະປະໂລຫິດ. ໃນຕອນຕົ້ນຂອງປະຫວັດສາດ, ຜູ້ນໍາຂອງສາດສະໜາຈັກໄດ້ຢຸດການມອບຖານະປະໂລຫິດໃຫ້ແກ່ເຊື້ອສາຍທີ່ເປັນຜູ້ຊາຍຂອງຄົນອາຟຣິກາ. ບັນທຶກຂອງສາດສະໜາຈັກ ບໍ່ມີຂໍ້ມູນທີ່ແຈ່ມແຈ້ງກ່ຽວກັບສາເຫດຂອງການປະຕິບັດນີ້. ຜູ້ນໍາຂອງສາດສະໜາຈັກເຊື່ອວ່າ ຈໍາເປັນຕ້ອງໄດ້ຮັບການເປີດເຜີຍຈາກພຣະເຈົ້າ ສໍາລັບການປ່ຽນແປງ ແລະ ກໍໄດ້ອະທິຖານ ທູນຂໍການຊີ້ນໍາ. ການເປີດເຜີຍໄດ້ມາເຖິງ ປະທານຂອງສາດສະໜາຈັກ ສະເປັນເຊີ ດັບເບິນຢູ ຄິມໂບ ແລະ ໄດ້ຖືກຢືນຢັນຕໍ່ຜູ້ນໍາຄົນອື່ນໆຂອງສາດສະໜາຈັກ ໃນພຣະວິຫານເຊົາເລັກ ໃນວັນທີ 1 ເດືອນມິຖຸນາ, 1978. ການເປີດເຜີຍໄດ້ຍົກເລີກເງື່ອນໄຂທັງໝົດ ກ່ຽວກັບເຊື້ອຊາດ ທີ່ຄັ້ງໜຶ່ງ ເຄີຍກ່ຽວຂ້ອງກັບຖານະປະໂລຫິດ.*

ເຖິງຜູ້ທີ່ກ່ຽວຂ້ອງ:

ໃນວັນທີ 30 ເດືອນກັນຍາ 1978, ທີ່ກອງປະຊຸມໃຫຍ່ສາມັນເຄິ່ງປີ ຄັ້ງທີ 148 ຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ເລື່ອງຕໍ່ໄປນີ້ໄດ້ຖືກນໍາສະເໜີໂດຍປະທານເອັນ ແອວດອນ ແທນເນີ, ທີ່ປຶກສາທີໜຶ່ງໃນຝ່າຍປະທານສູງສຸດຂອງສາດສະໜາຈັກ:

ໃນຕົ້ນເດືອນມິຖຸນາຂອງປີນີ້, ຝ່າຍປະທານສູງສຸດໄດ້ປະກາດວ່າ ປະທານສະເປັນເຊີ ດັບເບິນຢູ ຄິມໂບ ໄດ້ຮັບການເປີດເຜີຍໃຫ້ມອບພອນຂອງຖານະປະໂລຫິດ ແລະ ພອນຂອງພຣະວິຫານໃຫ້ແກ່ສະມາຊິກຜູ້ຊາຍທີ່ມີຄ່າຄວນທຸກຄົນຂອງສາດສະໜາຈັກ. ປະທານຄິມໂບ ໄດ້ຂໍໃຫ້ຂ້າພະເຈົ້າແຈ້ງບອກຢູ່ໃນກອງປະຊຸມໃຫຍ່ວ່າ ຫລັງຈາກເພິ່ນໄດ້ຮັບການເປີດເຜີຍນີ້, ຊຶ່ງມາເຖິງເພິ່ນຫລັງຈາກທີ່ໄດ້ຄຶດໄຕ່ຕອງ ແລະ ອະທິຖານເປັນເວລາດົນນານຢູ່ໃນຫ້ອງສັກສິດຢູ່ໃນພຣະວິຫານທີ່ສັກສິດ, ແລ້ວເພິ່ນໄດ້ສະເໜີມັນຕໍ່ທີ່ປຶກສາຂອງເພິ່ນ, ຜູ້ຊຶ່ງຍອມຮັບ ແລະ ເຫັນພ້ອມ. ຈາກນັ້ນມັນໄດ້ຖືກສະເໜີຕໍ່ກຸ່ມອັກຄະສາວົກສິບສອງ, ຜູ້ຊຶ່ງໄດ້ເຫັນພ້ອມຢ່າງເປັນເອກະສັນ, ແລະ ຕໍ່ມາໄດ້ຖືກສະເໜີຕໍ່ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ທັງໝົດ, ຜູ້ຊຶ່ງໄດ້ເຫັນພ້ອມຢ່າງເປັນເອກະສັນເຊັ່ນດຽວກັນ.

ປະທານຄິມໂບ ໄດ້ຂໍໃຫ້ຂ້າພະເຈົ້າອ່ານຈົດໝາຍສະບັບນີ້ໃນເວລານີ້:

ວັນທີ 8 ເດືອນມິຖຸນາ, 1978
ເຖິງເຈົ້າໜ້າທີ່ຖານະປະໂລຫິດສາມັນ ແລະ ໃນທ້ອງຖິ່ນທັງຫລາຍຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍຕະຫລອດທົ່ວໂລກ:

ອ້າຍນ້ອງທີ່ຮັກແພງທັງຫລາຍ:

ດັ່ງທີ່ພວກເຮົາໄດ້ເປັນພະຍານເຖິງການຂະຫຍາຍວຽກງານ ຂອງພຣະຜູ້ເປັນເຈົ້າຢູ່ເທິງແຜ່ນດິນໂລກ, ພວກເຮົາມີຄວາມກະຕັນຍູຫລາຍ ທີ່ຜູ້ຄົນໃນຫລາຍປະຊາຊາດ ຮັບ

ເອົາຂ່າວສານຂອງພຣະກິດຕິຄຸນ ທີ່ໄດ້ຟື້ນຟູຄືນມາໃໝ່, ແລະ ໄດ້ເຂົ້າຮ່ວມສາດສະໜາຈັກ ເປັນຈຳນວນທີ່ເພີ່ມຂຶ້ນເລື້ອຍໆ. ຜົນກໍຄື ເລື່ອງນີ້ໄດ້ດົນໃຈພວກເຮົາ ໃຫ້ມີຄວາມປາດຖະໜາທີ່ຈະມອບສິດທິພິເສດ ແລະ ພອນທັງປວງ ຊຶ່ງພຣະກິດຕິຄຸນມີໄວ້ສຳລັບສະມາຊິກທີ່ມີຄ່າຄວນທຸກຄົນຂອງສາດສະໜາຈັກ.

ໂດຍທີ່ຮູ້ເຖິງຄຳສັນຍາທີ່ໄດ້ເຮັດໄວ້ໂດຍສາດສະດາ ແລະ ປະທານຂອງສາດສະໜາຈັກຜູ້ທີ່ໄດ້ມີຊີວິດຢູ່ກ່ອນພວກເຮົາໃນເວລາໜຶ່ງ, ໃນແຜນນິລັນດອນຂອງພຣະເຈົ້າ, ອ້າຍນ້ອງທີ່ມີຄ່າຄວນທຸກຄົນສາມາດໄດ້ຮັບຖານະປະໂລຫິດ, ແລະ ໂດຍການເປັນພະຍານເຖິງຄວາມຊື່ສັດຂອງຄົນເຫລົ່ານັ້ນທີ່ບໍ່ອາດໄດ້ຮັບຖານະປະໂລຫິດ, ພວກເຮົາຈຶ່ງໄດ້ອ້ອນວອນເປັນເວລາດົນນານ ແລະ ດ້ວຍຄວາມຈິງຈັງແທນຜູ້ຄົນເຫລົ່ານັ້ນ, ອ້າຍນ້ອງຜູ້ຊື່ສັດຂອງພວກເຮົາ, ໂດຍໄດ້ໃຊ້ຫລາຍຊົ່ວໂມງຢູ່ໃນຫ້ອງຊັ້ນເທິງຂອງພຣະວິຫານອ້ອນວອນພຣະຜູ້ເປັນເຈົ້າເພື່ອຂໍການນຳພາຈາກສະຫວັນ.

ພຣະອົງໄດ້ຍິນຄຳອະທິຖານຂອງພວກເຮົາ, ແລະ ໂດຍການເປີດເຜີຍໄດ້ຢືນຢັນວ່າວັນທີ່ໄດ້ສັນຍາໄວ້ແຕ່ດົນນານໄດ້ມາເຖິງແລ້ວ ເມື່ອຊາຍຜູ້ມີຄ່າຄວນ, ທີ່ຊື່ສັດທຸກຄົນໃນສາດສະໜາຈັກຈະໄດ້ຮັບຖານະປະໂລຫິດສັກສິດ, ພ້ອມດ້ວຍອຳນາດທີ່ຈະໃຊ້ສິດອຳນາດຈາກສະຫວັນ, ແລະ ຊື່ນຊົມກັບຄົນທີ່ເຂົາຮັກໃນພອນທຸກປະການທີ່ຫລັ່ງໄຫລມາຈາກຖານະປະໂລຫິດ, ລວມທັງພອນຂອງພຣະວິຫານ. ດັ່ງນັ້ນ, ສະມາຊິກຜູ້ຊາຍທີ່ມີຄ່າຄວນທຸກຄົນໃນສາດສະໜາຈັກຈະໄດ້ຮັບການແຕ່ງຕັ້ງສູ່ຖານະປະໂລຫິດໂດຍບໍ່ຄຳນຶງເຖິງເຊື້ອຊາດ ຫລື ຜິວພັນ. ຜູ້ນຳຖານະປະໂລຫິດໄດ້ຮັບຄຳແນະນຳໃຫ້ເຮັດຕາມນະໂຍບາຍຂອງການສຳພາດຜູ້ຖືກພິຈາລະນາທັງໝົດຢ່າງລະມັດລະວັງ ສຳລັບການແຕ່ງຕັ້ງບໍ່ວ່າຈະເປັນຖານະປະໂລຫິດ ແຫ່ງອາໂຣນ ຫລື ຖານະປະໂລຫິດແຫ່ງເມນຄີເສເດັກເພື່ອໃຫ້ແນ່ໃຈວ່າເຂົາເຈົ້າມີຄຸນສົມບັດຕາມມາດຕະຖານທີ່ໄດ້ຈັດຕັ້ງໄວ້ສຳລັບການມີຄ່າຄວນ.

ພວກເຮົາຂໍປະກາດດ້ວຍສະຕິສຳປະສັນຍະວ່າ ບັດນີ້ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ພຣະປະສົງຂອງພຣະອົງເປັນທີ່ຮູ້ຈັກແກ່ລູກໆທັງປວງຂອງພຣະອົງຕະຫລອດທົ່ວທັງແຜ່ນດິນໂລກ ຜູ້ຈະເຊື່ອຟັງສຽງຂອງຜູ້ຮັບໃຊ້ທີ່ໄດ້ຮັບສິດອຳນາດຈາກພຣະອົງ, ແລະ ຕຽມຕົນເອງໃຫ້ພ້ອມທີ່ຈະຮັບເອົາພອນທຸກປະການຂອງພຣະກິດຕິຄຸນ.

ດ້ວຍຄວາມຈິງໃຈ,

ສະເປັນເຊີ ດັບເບິນຢູ ຄິມໂບ
ເອັນ ແອວດອນ ແທນເນີ
ແມຣິອອນ ຈີ ຣອມນີ

ຝ່າຍປະທານສູງສຸດ

ໂດຍການຮັບຮູ້ສະເປັນເຊີ ດັບເບິນຢູ ຄິມໂບ ເປັນສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍ, ແລະ ປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດ

ທ້າຍ, ຈຶ່ງຂໍສະເໜີວ່າພວກເຮົາໃນຖານະທີ່ເປັນກຳມະການຝ່າຍກົດໝາຍຍອມຮັບວ່າການເປີດເຜີຍນີ້ເປັນພຣະຄຳ ແລະ ພຣະປະສົງຂອງພຣະຜູ້ເປັນເຈົ້າ. ທຸກຄົນທີ່ເຫັນດ້ວຍຂໍໃຫ້ຍົກມືຂວາຂອງທ່ານຂຶ້ນ. ຄົນທີ່ຄັດຄ້ານຂໍໃຫ້ຍົກມືຂຶ້ນ.

ການອອກສຽງສະໜັບສະໜູນຂໍ້ສະເໜີທີ່ກ່າວມາແລ້ວຢູ່ຂ້າງເທິງແມ່ນເຫັນພ້ອມເປັນເອກະສັນ.

ເມືອງເຊົາເລັກ, ລັດຢູທາ, ວັນທີ 30 ເດືອນກັນຍາ, 1978.

# ໄຂ່ມຸກ
# ອັນລ້ຳຄ່າ

ການຄັດເລືອກມາຈາກການເປີດເຜີຍ,
ການແປ, ແລະ ຄຳບັນຍາຍຂອງ
ໂຈເຊັບ ສະມິດ

ສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍຄົນທຳອິດຂອງ
ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງ
ໄພ່ພົນຍຸກສຸດທ້າຍ

# ສາລະບານ

ຄຳນຳ . . . . . . . . . . . . . . . . . . . . . . . v
ໂມເຊ . . . . . . . . . . . . . . . . . . . . . . . 1
ອັບຣາຮາມ . . . . . . . . . . . . . . . . . . . . . . 40
  ສຳເນົາ 1 . . . . . . . . . . . . . . . . . . . . . 40
  ສຳເນົາ 2 . . . . . . . . . . . . . . . . . . . . . 50
  ສຳເນົາ 3 . . . . . . . . . . . . . . . . . . . . . 57
ໂຈເຊັບ ສະມິດ—ມັດທາຍ . . . . . . . . . . . . . . . . . 60
ໂຈເຊັບ ສະມິດ—ປະຫວັດ . . . . . . . . . . . . . . . . . 65
ຫລັກແຫ່ງຄວາມເຊື່ອ . . . . . . . . . . . . . . . . . . 84

# ຄຳນຳ

ໄຂ່ມຸກອັນລ້ຳຄ່າເປັນການຄັດເລືອກເອົາເນື້ອຄວາມທີ່ດີທີ່ສຸດ ຊຶ່ງກ່ຽວກັບດ້ານສຳຄັນຫລາຍໆດ້ານກ່ຽວກັບສັດທາ ແລະ ຄຳສອນຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ. ເນື້ອຫາເຫລົ່ານີ້ໄດ້ຖືກແປ ແລະ ຖືກຈັດທຳໂດຍສາດສະດາໂຈເຊັບ ສະມິດ, ແລະ ຫລາຍສ່ວນກໍຖືກຈັດພິມໃນວາລະສານຂອງສາດສະໜາຈັກໃນຍຸກສະໄໝຂອງເພິ່ນ.

ເນື້ອຄວາມສຳຄັນຊຸດທຳອິດຊຶ່ງມີຊື່ວ່າ ໄຂ່ມຸກອັນລ້ຳຄ່າ ໄດ້ຖືກຈັດທຳຂຶ້ນໃນປີ 1851 ໂດຍແອວເດີ ແຟຣງກລິນ ດີ ຣິເຈີດສ໌, ຊຶ່ງໃນຕອນນັ້ນເປັນສະມາຊິກຄົນໜຶ່ງໃນສະພາອັກຄະສາວົກສິບສອງ ແລະ ເປັນປະທານເຜີຍແຜ່ຢູ່ເຂດອັງກິດ. ຈຸດປະສົງຂອງມັນຄືທີ່ຈະໃຫ້ຄວາມສະດວກໃນການເຂົ້າໃຈເຖິງບົດຄວາມສຳຄັນ ຊຶ່ງເຄີຍພິມເຜີຍແຜ່ຢ່າງຈຳກັດໃນວັນເວລາຂອງໂຈເຊັບ ສະມິດ. ເມື່ອສະມາຊິກຂອງສາດສະໜາຈັກມີເພີ່ມເຕີມຫລາຍຂຶ້ນຕະຫລອດທົ່ວເອີຣົບ ແລະ ອາເມຣິກາ, ຈຶ່ງມີຄວາມຈຳເປັນຕ້ອງຈັດທຳເນື້ອຄວາມເຫລົ່ານີ້ໄວ້ໃຊ້. ໄຂ່ມຸກອັນລ້ຳຄ່າຖືກໃຊ້ກັນຢ່າງກວ້າງຂວາງ ແລະ ຕໍ່ມາໄດ້ກາຍເປັນໜັງສືມາດຕະຖານຂອງສາດສະໜາຈັກ ໂດຍການດຳເນີນງານຂອງຝ່າຍປະທານສູງສຸດ ແລະ ກອງປະຊຸມໃຫຍ່ສາມັນເຄິ່ງປີ ໃນເມືອງເຊົາເລັກ ໃນວັນທີ 10 ເດືອນຕຸລາ, 1880.

ມີການກວດແກ້ເນື້ອຄວາມຫລາຍເທື່ອຕາມຄວາມຮຽກຮ້ອງຕ້ອງການຂອງສາດສະໜາຈັກ. ໃນປີ 1878 ໄດ້ຕື່ມພາກສ່ວນໜຶ່ງຂອງໜັງສືໂມເຊໃສ່ນຳ ຊຶ່ງບໍ່ມີຢູ່ໃນຊຸດທຳອິດ. ໃນປີ 1902 ບາງສ່ວນໃນໄຂ່ມຸກອັນລ້ຳຄ່າ ຊຶ່ງມີຂໍ້ຄວາມຊ້ຳກັນຢູ່ໃນຄຳສອນ ແລະ ພັນທະສັນຍາ ໄດ້ຖືກຕັດອອກ. ການຈັດເຂົ້າເປັນບົດ ແລະ ຂໍ້, ພ້ອມດ້ວຍໝາຍເຫດຢູ່ທາງລຸ່ມໜ້າປຶ້ມ, ໄດ້ຈັດຂຶ້ນໃນປີ 1902. ການຈັດພິມຄັ້ງທຳອິດແມ່ນເປັນລັກສະນະ ມີສອງແຖວ, ພ້ອມດ້ວຍດັດຊະນີ, ໄດ້ຈັດຂຶ້ນໃນປີ 1921. ບໍ່ໄດ້ມີການດັດແປງອື່ນໃດອີກຈົນເຖິງເດືອນເມສາ ປີ 1976, ເມື່ອມີການເພີ່ມການເປີດເຜີຍສອງເລື່ອງໃສ່. ໃນປີ 1979 ສອງເລື່ອງດັ່ງກ່າວໄດ້ຖືກຍ້າຍອອກຈາກໄຂ່ມຸກອັນລ້ຳຄ່າ ແລ້ວເອົາໄປໄວ້ໃນຄຳສອນ ແລະ ພັນທະສັນຍາ, ຊຶ່ງຕອນນີ້ຄືພາກ 137 ແລະ 138. ໃນສະບັບພິມປະຈຸບັນກໍມີການດັດແປງເພື່ອໃຫ້ສອດຄ່ອງກັບເອກະສານລຸ້ນທຳອິດ.

ຕໍ່ໄປນີ້ເປັນຄຳນຳຫຍໍ້ສຳລັບເນື້ອຄວາມໃນປະຈຸບັນ:

1. *ການຄັດເລືອກມາຈາກໜັງສືໂມເຊ.* ພາກສ່ວນໜຶ່ງທີ່ເອົາມາຈາກໜັງສືປະຖົມມະການ ຊຶ່ງໂຈເຊັບ ສະມິດ ໄດ້ແປຈາກພຣະຄຣິສຕະທຳຄຳພີ, ທີ່ເພິ່ນໄດ້ເລີ່ມຕົ້ນແປໃນເດືອນມິຖຸນາ 1830.

2. *ໜັງສືອັບຣາຮາມ.* ການແປທີ່ດົນໃຈຈາກການຂຽນຂອງອັບຣາຮາມ. ໂຈເຊັບ ສະມິດໄດ້ເລີ່ມຕົ້ນການແປໃນປີ 1835 ຫລັງຈາກໄດ້ແຜ່ນພະພາຍຣັສ ຂອງເອຢິບ. ການແປໄດ້ຖືກພິມເປັນຕອນໆ ໃນວາລະສານ *Times and Seasons* ເລີ່ມຈາກວັນທີ 1ເດືອນມີນາ, 1842, ທີ່ເມືອງນາວູ, ລັດອິລິນອຍ.

3. *ໂຈເຊັບ ສະມິດ—ມັດທາຍ.* ພາກສ່ວນໜຶ່ງທີ່ເອົາມາຈາກປະຈັກພະຍານຂອງ ມັດທາຍ ຊຶ່ງໂຈເຊັບ ສະມິດ ໄດ້ແປຈາກພຣະຄຣິສຕະທຳຄຳພີ (ເບິ່ງ ຄຳສອນ ແລະ ພັນທະສັນຍາ 45:60–61 ສຳລັບພຣະບັນຊາຂອງພຣະເຈົ້າໃຫ້ເລີ່ມຕົ້ນການແປ ພຣະຄຳພີໃໝ່).
4. *ໂຈເຊັບ ສະມິດ—ປະຫວັດ.* ການຄັດເລືອກມາຈາກປະຈັກພະຍານ ແລະ ປະຫວັດ ສາດຢ່າງເປັນທາງການຂອງໂຈເຊັບ ສະມິດ, ຊຶ່ງເພິ່ນ ແລະ ຜູ້ຂຽນຂອງເພິ່ນ ໄດ້ ຕຽມໄວ້ໃນປີ 1838–1839 ແລະ ໄດ້ພິມເປັນຕອນໆໃນວາລະສານ *Times and Seasons* ໃນເມືອງນາວູ, ລັດອີລີນອຍ, ເລີ່ມຈາກວັນທີ 15 ເດືອນມີນາ, 1842.
5. *ຫລັກແຫ່ງຄວາມເຊື່ອຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດ ທ້າຍ.* ຖ້ອຍຖະແຫລງໂດຍໂຈເຊັບ ສະມິດ ທີ່ໄດ້ພິມໃນວາລະສານ *Times and Seasons* ວັນທີ 1ເດືອນມີນາ, 1842, ພ້ອມກັບປະຫວັດສາດສັ້ນໆຂອງສາດສະໜາ ຈັກ ຊຶ່ງເປັນທີ່ຮູ້ຈັກກັນດີວ່າເປັນ ຈົດໝາຍເວັ້ນເວິທ໌.

ການຄັດເລືອກມາຈາກ

# ໜັງສືໂມເຊ

*ພາກສ່ວນໜຶ່ງທີ່ເອົາມາຈາກການແປພຣະຄຣິສຕະທຳຄຳພີດັ່ງທີ່ເປີດເຜີຍແກ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ, ເດືອນມິຖຸນາ 1830–ເດືອນກຸມພາ 1831.*

## ບົດທີ 1
(ເດືອນມິຖຸນາ 1830)

*ພຣະເຈົ້າເປີດເຜີຍພຣະອົງເອງຕໍ່ໂມເຊ—ໂມເຊຖືກປ່ຽນສະພາບ—ເພິ່ນປະເຊີນກັບຊາຕານ—ໂມເຊເຫັນໂລກຢ່າງຫລວງຫລາຍທີ່ມີຜູ້ຄົນອາໄສຢູ່—ພຣະບຸດສ້າງໂລກຕ່າງໆຈົນນັບບໍ່ຖ້ວນ—ວຽກງານ ແລະ ລັດສະໝີພາບຂອງພຣະເຈົ້າຄືການກໍ່ໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ.*

1 ພຣະຄຳຂອງພຣະເຈົ້າ, ຊຶ່ງພຣະອົງໄດ້
[ກ]ກ່າວກັບ [ຂ]ໂມເຊໃນເວລາທີ່ໄດ້ພາໂມເຊ
ຂຶ້ນໄປຍັງພູທີ່ສູງທີ່ສຸດ,
2 ແລະ ເພິ່ນ ໄດ້ [ກ]ເຫັນພຣະເຈົ້າ [ຂ]ໜ້າ
ຕໍ່ໜ້າ, ແລະ ເພິ່ນໄດ້ເວົ້າລົມກັບພຣະອົງ,
ແລະ [ຄ]ລັດສະໝີພາບຂອງ ພຣະເຈົ້າໄດ້ຢູ່
ກັບໂມເຊ; ສະນັ້ນໂມເຊຈຶ່ງສາມາດ [ງ]ທົນ
ກັບການປະທັບຢູ່ຂອງພຣະອົງໄດ້.
3 ແລະ ພຣະເຈົ້າໄດ້ກ່າວກັບໂມເຊວ່າ:
ຈົ່ງເບິ່ງ, ເຮົາຄືອົງພຣະຜູ້ເປັນເຈົ້າ [ກ]ຜູ້ຊົງ
ລິດອຳນາດຍິ່ງໃຫຍ່, ແລະ [ຂ]ບໍ່ມີທີ່ສຸດຄື
ນາມຂອງເຮົາ; ເພາະເຮົາປາດສະຈາກ
ການເລີ່ມຕົ້ນຂອງມື້ ຫລື ການສິ້ນສຸດຂອງ
ປີ; ແລະ ນີ້ບໍ່ແມ່ນບໍ່ມີທີ່ສຸດບໍ?
4 ແລະ, ຈົ່ງເບິ່ງ, ເຈົ້າເປັນບຸດຂອງເຮົາ;
ດັ່ງນັ້ນຈົ່ງ [ກ]ເບິ່ງ, ແລະ ເຮົາຈະສະແດງ
ໃຫ້ເຈົ້າເຫັນ [ຂ]ຝີມືຂອງເຮົາ; ແຕ່ບໍ່ແມ່ນທັງ
ໝົດ, ເພາະ [ຄ]ວຽກງານຂອງເຮົາບໍ່ມີ [ງ]ທີ່ສຸດ,
ແລະ [ຈ]ຖ້ອຍຄຳຂອງເຮົານຳອີກ, ເພາະມັນ
ບໍ່ເຄີຍສິ້ນສຸດ.
5 ດັ່ງນັ້ນ, ບໍ່ມີມະນຸດຄົນໃດຈະສາມາດ
ຫລຽວເຫັນວຽກງານທັງໝົດຂອງເຮົາ, ຍົກ
ເວັ້ນແຕ່ເຂົາຈະຫລຽວເບິ່ງລັດສະໝີພາບ
ທັງໝົດຂອງເຮົາ; ແລະ ບໍ່ມີມະນຸດຄົນໃດ
ຈະສາມາດຫລຽວເຫັນລັດສະໝີພາບທັງ
ໝົດຂອງເຮົາໄດ້, ແລະ ຫລັງຈາກນັ້ນຍັງ
ຄົງຢູ່ໃນເນື້ອໜັງເທິງແຜ່ນດິນໂລກ.
6 ແລະ ເຮົາມີວຽກງານຢ່າງໜຶ່ງສຳລັບ
ເຈົ້າ, ໂມເຊ, ບຸດຂອງເຮົາ; ແລະ ເຈົ້າຈະ

---

**1** 1 *ກ* ແອວ 12:30; ມຊ 1:42.
*ຂ* ຄມພ ໂມເຊ.
2 *ກ* ອພຍ 3:6; 33:11; ປຈສ ອພຍ 33:20, 23 (ພາກທ້ອຍທ້າຍ); ຢຮ 1:18; 6:46; ອທ 3:6–16; ມຊ 1:11.
*ຂ* ຈບຊ 12:6–8; ພບຍ 34:10; ຄພ 17:1.
*ຄ* ພບຍ 5:24; ມຊ 1:13–14, 25. ຄມພ ລັດສະໝີພາບ.
*ງ* ຄມພ ການປ່ຽນສະພາບ.
3 *ກ* ພນມ 11:17; 19:6; 1 ນຟ 1:14; ຄພ 121:4. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຂ* ອຊຢ 63:16; ຄພ 19:9–12; ມຊ 7:35. ຄມພ ບໍ່ມີທີ່ສຸດ.
4 *ກ* ມຊ 7:4.
*ຂ* ມຊ 7:32, 35–37.
*ຄ* ພສສ 40:5; ຄພ 76:114.
*ງ* ພສສ 111:7–8; ມຊ 1:38.
*ຈ* 2 ນຟ 9:16; ຄພ 1:37–39. ຄມພ ພຣະຄຳຂອງພຣະເຈົ້າ.

[ກ]ເໝືອນ [ຂ]ພຣະອົງດຽວທີ່ຖືກກຳເນີດຂອງເຮົາ; ແລະ ພຣະອົງດຽວທີ່ຖືກກຳເນີດຂອງເຮົາເປັນ ແລະ ຈະເປັນ [ຄ]ພຣະຜູ້ຊ່ວຍໃຫ້ລອດ, ເພາະວ່າພຣະອົງເຕັມໄປດ້ວຍ [ງ]ພຣະຄຸນ ແລະ [ຈ]ຄວາມຈິງ; ແຕ່ [ສ]ບໍ່ມີພຣະເຈົ້າອື່ນນອກຈາກເຮົາ, ແລະ ທຸກສິ່ງທັງປວງຢູ່ຕໍ່ໜ້າເຮົາ, ເພາະເຮົາ [ຊ]ຮູ້ຈັກມັນທັງໝົດ.

7 ແລະ ບັດນີ້, ຈົ່ງເບິ່ງ, ສິ່ງນີ້ສິ່ງດຽວທີ່ເຮົາສະແດງແກ່ເຈົ້າ, ໂມເຊ, ບຸດຂອງເຮົາ, ເພາະເຈົ້າຢູ່ໃນໂລກ, ແລະ ບັດນີ້ເຮົາຈຶ່ງສະແດງມັນແກ່ເຈົ້າ.

8 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມເຊໄດ້ຫລຽວເບິ່ງ, ແລະ ໄດ້ເຫັນ [ກ]ໂລກຊຶ່ງເຫິງນັ້ນເພິ່ນໄດ້ຖືກສ້າງຂຶ້ນ; ແລະ ໂມເຊໄດ້ [ຂ]ເຫັນໂລກ ແລະ ບ່ອນໄກສຸດຂອງມັນ, ແລະ ລູກຫລານມະນຸດທັງປວງທີ່ອາໄສຢູ່, ແລະ ສິ່ງທີ່ໄດ້ຖືກສ້າງຂຶ້ນມາ; ຊຶ່ງໃນສິ່ງເຫລົ່ານັ້ນເພິ່ນມີ [ຄ]ຄວາມແປກໃຈ ແລະ ປະຫລາດໃຈຫລາຍທີ່ສຸດ.

9 ແລະ ການປະທັບຢູ່ຂອງພຣະເຈົ້າໄດ້ຖອນໄປຈາກໂມເຊ, ຈົນວ່າລັດສະໝີພາບຂອງພຣະອົງບໍ່ໄດ້ຢູ່ກັບໂມເຊອີກຕໍ່ໄປ; ແລະ ໂມເຊຖືກປະໄວ້ຢູ່ຕາມລຳພັງ, ເພິ່ນຈຶ່ງໄດ້ລົ້ມລົງຢູ່ກັບພື້ນດິນ.

10 ແລະ ເຫດການໄດ້ບັງເກີດຂຶ້ນຄື ເປັນເວລາຫລາຍຊົ່ວໂມງກ່ອນໂມເຊຈະໄດ້ຮັບ [ກ]ກຳລັງວັງຊາປົກກະຕິເໝືອນມະນຸດຄືນ; ແລະ ເພິ່ນໄດ້ກ່າວກັບຕົນເອງວ່າ: ບັດນີ້, ເພາະເຫດນີ້ ຂ້າພະເຈົ້າຈຶ່ງຮູ້ວ່າ ມະນຸດ [ຂ]ບໍ່ໄດ້ເປັນອັນໃດເລີຍ, ຊຶ່ງເລື່ອງນີ້ຂ້າພະເຈົ້າບໍ່ເຄີຍຄິດມາກ່ອນ.

11 ແຕ່ບັດນີ້ດວງຕາຂອງຂ້າພະເຈົ້າໄດ້ຫລຽວເຫັນ [ກ]ພຣະເຈົ້າແລ້ວ; ແຕ່ບໍ່ແມ່ນ [ຂ]ຝ່າຍທຳມະຊາດຂອງຂ້າພະເຈົ້າ, ແຕ່ດວງຕາຝ່າຍວິນຍານຂອງຂ້າພະເຈົ້າ, ເພາະວ່າດວງຕາຝ່າຍທຳມະຊາດຂອງຂ້າພະເຈົ້າບໍ່ສາມາດຫລຽວເຫັນ; ເພາະວ່າຂ້າພະເຈົ້າຈະ [ຄ]ຫ່ຽວແຫ້ງ ແລະ [ງ]ຕາຍໄປໃນການປະທັບຢູ່ຂອງພຣະອົງ; ແຕ່ລັດສະໝີພາບຂອງພຣະອົງໄດ້ຢູ່ນຳຂ້າພະເຈົ້າ; ແລະ ຂ້າພະເຈົ້າໄດ້ເຫັນ [ຈ]ພຣະພັກຂອງພຣະອົງ, ເພາະວ່າຂ້າພະເຈົ້າໄດ້ຖືກ [ສ]ປ່ຽນສະພາບຢູ່ຕໍ່ພຣະພັກຂອງພຣະອົງ.

12 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອໂມເຊໄດ້ກ່າວຖ້ອຍຄຳເຫລົ່ານີ້ແລ້ວ, ຈົ່ງເບິ່ງ, [ກ]ຊາຕານໄດ້ມາ [ຂ]ລໍ້ລວງເພິ່ນ, ໂດຍກ່າວວ່າ: ໂມເຊ, ບຸດມະນຸດ, ຈົ່ງນະມັດສະການເຮົາ.

13 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ໂມເຊໄດ້ຫລຽວເບິ່ງຊາຕານ ແລະ ໄດ້ກ່າວວ່າ: ທ່ານເປັນໃຜ? ເພາະຈົ່ງເບິ່ງ, ຂ້າພະ

6ກ ປຖກ 1:26; ອທ 3:14–15; ມຊ 1:13–16.
ຂ ຄມພ ອົງດຽວທີ່ຖືກກຳເນີດ.
ຄ ຄມພ ພຣະຜູ້ຊ່ວຍໃຫ້ລອດ.
ງ ຢຮ 1:14, 17; ແອວ 13:9. ຄມພ ພຣະຄຸນ.
ຈ ມຊ 5:7.
ສ 1 ກສ 8:60; ອຊຢ 45:5–18, 21–22.
ຊ 1 ນຟ 9:6; 2 ນຟ 9:20; ແອວ 18:32; ຄພ 38:1–2. ຄມພ ຮອບຮູ້ທຸກຢ່າງ.
8ກ ມຊ 2:1.
ຂ ມຊ 1:27.
ຄ ພສສ 8:3–4.
10ກ ດນອ 10:8, 17; 1 ນຟ 17:47; ແອວ 27:17; ຈສ—ປ 1:20.
ຂ ດນອ 4:35; ຣລມ 12:7.
11ກ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
ຂ ຄພ 67:10–13; ມຊ 6:36.
ຄ ອພຍ 19:21.
ງ ອພຍ 20:19.
ຈ ປຖກ 32:30; ມຊ 7:4.
ສ ມທ 17:1–8. ຄມພ ການປ່ຽນສະພາບ.
12ກ ມຊ 4:1–4. ຄມພ ມານ.
ຂ ມຊ 6:49. ຄມພ ລໍ້ລວງ, ການລໍ້ລວງ.

ເຈົ້າເປັນ [ກ]ບຸດຂອງພຣະເຈົ້າ, ເປັນເໝືອນ
ພຣະອົງດຽວທີ່ຖືກກຳເນີດຂອງພຣະອົງ;
ແລະ ລັດສະໝີພາບຂອງທ່ານຢູ່ໃສ, ທີ່ຂ້າ
ພະເຈົ້າຈະນະມັດການທ່ານ?
14 ເພາະຈົ່ງເບິ່ງ, ຂ້າພະເຈົ້າບໍ່ສາມາດ
ຫລຽວເບິ່ງພຣະເຈົ້າ, ຍົກເວັ້ນແຕ່ລັດສະ
ໝີພາບຂອງພຣະອົງມາຢູ່ນຳຂ້າພະເຈົ້າ,
ແລະ ຂ້າພະເຈົ້າໄດ້ [ກ]ປ່ຽນສະພາບຕໍ່ພຣະ
ພັກຂອງພຣະອົງ. ແຕ່ຂ້າພະເຈົ້າສາມາດ
ຫລຽວເບິ່ງທ່ານໄດ້ໃນສະພາບຂອງມະນຸດ
ທີ່ມີຈິດໃຈທຳມະດາ. ເປັນແນວນັ້ນແທ້, ບໍ່
ແມ່ນບໍ?
15 ຂໍພຣະນາມຂອງພຣະເຈົ້າຂອງຂ້າ
ພະເຈົ້າ ຈົ່ງພຣະກະເສີມສຳລານເຖີດ,
ເພາະພຣະວິນຍານຂອງພຣະອົງຍັງບໍ່ໄດ້
ຖອນອອກໄປຈາກຂ້າພະເຈົ້າທັງໝົດເທື່ອ,
ຖ້າບໍ່ດັ່ງນັ້ນ ລັດສະໝີພາບຂອງທ່ານຢູ່
ໃສ, ເພາະວ່າມັນເປັນຄວາມມືດສຳລັບຂ້າ
ພະເຈົ້າ? ແລະ ຂ້າພະເຈົ້າສາມາດຈຳແນກ
ໄດ້ລະຫວ່າງທ່ານ ແລະ ພຣະເຈົ້າ; ເພາະ
ວ່າພຣະເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງ
[ກ]ນະມັດສະການພຣະເຈົ້າ, ເພາະວ່າພຣະ
ອົງເທົ່ານັ້ນທີ່ເຈົ້າຈະ [ຂ]ຮັບໃຊ້.
16 ຈົ່ງອອກໄປຈາກບ່ອນນີ້ເສຍ, ຊາຕານ;
ຢ່າຫລອກລວງຂ້າພະເຈົ້າ; ເພາະວ່າພຣະ
ເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ເຈົ້າເປັນ
[ກ]ເໝືອນພຣະອົງດຽວທີ່ຖືກກຳເນີດຂອງເຮົາ.
17 ແລະ ພຣະອົງຍັງໄດ້ປະທານພຣະ
ບັນຍັດໃຫ້ຂ້າພະເຈົ້ານຳອີກຕອນພຣະອົງ
ເອີ້ນຂ້າພະເຈົ້າຈາກ [ກ]ພຸ່ມໄມ້ທີ່ລຸກເປັນ
ໄຟ, ໂດຍກ່າວວ່າ: ຈົ່ງ [ຂ]ເອີ້ນຫາພຣະເຈົ້າ
ໃນພຣະນາມຂອງພຣະອົງດຽວທີ່ຖືກກຳເນີດ
ຂອງເຮົາ, ແລະ ນະມັດສະການເຮົາ.
18 ແລະ ໂມເຊໄດ້ກ່າວອີກວ່າ: ຂ້າພະ
ເຈົ້າຈະບໍ່ຢຸດເອີ້ນຫາພຣະເຈົ້າ, ຂ້າພະເຈົ້າ
ມີເລື່ອງອື່ນໆທີ່ຈະທູນຖາມພຣະອົງ: ເພາະ
ວ່າລັດສະໝີພາບຂອງພຣະອົງໄດ້ມາຢູ່ກັບ
ຂ້າພະເຈົ້າ, ດັ່ງນັ້ນຂ້າພະເຈົ້າຈຶ່ງສາມາດ
ຈຳແນກໄດ້ລະຫວ່າງພຣະອົງ ແລະ ທ່ານ.
ຈົ່ງອອກໄປຈາກບ່ອນນີ້ເສຍ, ຊາຕານ.
19 ແລະ ບັດນີ້, ເມື່ອໂມເຊໄດ້ກ່າວຖ້ອຍ
ຄຳເຫລົ່ານີ້ແລ້ວ, ຊາຕານໄດ້ຮ້ອງຂຶ້ນດ້ວຍ
ສຽງອັນດັງ, ແລະ ໄດ້ເວົ້າແບບໃຈຮ້າຍຢູ່
ເທິງພື້ນແຜ່ນດິນ, ແລະ ໄດ້ບັນຊາ, ໂດຍ
ກ່າວວ່າ: ເຮົາຄື [ກ]ພຣະອົງດຽວທີ່ຖືກກຳເນີດ,
ຈົ່ງນະມັດສະການເຮົາ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂມເຊໄດ້ເລີ່ມຢ້ານກົວຢ່າງໜັກ; ແລະ ໃນ
ຂະນະທີ່ເພິ່ນເລີ່ມຢ້ານກົວ, ເພິ່ນໄດ້ເຫັນ
ຄວາມຂົມຂື່ນຂອງ [ກ]ນະລົກ. ເຖິງຢ່າງໃດກໍ
ຕາມ, ໂດຍທີ່ໄດ້ [ຂ]ເອີ້ນຫາພຣະເຈົ້າ, ເພິ່ນ
ກໍໄດ້ຮັບພະລັງ, ແລະ ເພິ່ນໄດ້ສັ່ງ, ໂດຍ
ກ່າວວ່າ: ຈົ່ງໄປຈາກຂ້າພະເຈົ້າ, ຊາຕານ,
ເພາະວ່າພຣະເຈົ້າອົງດຽວນີ້ເທົ່ານັ້ນທີ່ຂ້າ
ພະເຈົ້າຈະນະມັດສະການ, ຊຶ່ງເປັນພຣະ
ເຈົ້າແຫ່ງລັດສະໝີພາບ.
21 ແລະ ບັດນີ້ [ກ]ຊາຕານເລີ່ມຕົວສັ່ນ,
ແລະ ແຜ່ນດິນໂລກໄດ້ສັ່ນສະເທືອນ; ແລະ
ໂມເຊໄດ້ຮັບພະລັງ, ແລະ ໄດ້ເອີ້ນຫາພຣະ
ເຈົ້າ, ໂດຍກ່າວວ່າ: ໃນພຣະນາມຂອງ
ພຣະອົງດຽວທີ່ຖືກກຳເນີດ, ຈົ່ງອອກໄປຈາກ
ບ່ອນນີ້ເສຍ, ຊາຕານ.

13 *ກ* ພສສ 82:6;
ຮຣ 12:9;
1 ຢຮ 3:2.
14 *ກ* ຄມພ ການປ່ຽນສະພາບ.
15 *ກ* ມທ 4:10.
ຄມພ ນະມັດສະການ.
*ຂ* 1 ຊມອ 7:3;
3 ນຟ 13:24.
16 *ກ* ມຊ 1:6.
17 *ກ* ອພຍ 3:2.
*ຂ* ມຊ 5:8.
19 *ກ* ມທ 24:4–5.
20 *ກ* ຄມພ ນະລົກ.
*ຂ* ຈສ—ປ 1:15–16.
ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
21 *ກ* ຄມພ ມານ.

22 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ຊາຕານໄດ້ຮ້ອງອອກມາດ້ວຍສຽງອັນດັງ,
ດ້ວຍການຮ້ອງໄຫ້, ແລະ ການຄວນຄາງ,
ແລະ ການ [ກ]ຂົບແຂ້ວຄ້ຽວຟັນ; ແລະ ມັນ
ໄດ້ອອກໄປຈາກບ່ອນນີ້, ແມ່ນແຕ່ຈາກໄປ
ພົ້ນໜ້າຂອງໂມເຊ, ຈົນວ່າເພິ່ນຫລຽວບໍ່
ເຫັນມັນອີກ.
23 ແລະ ບັດ ນີ້ ກ່ຽວ ກັບ ເລື່ອງ ນີ້ ໂມເຊ
ໄດ້ ເປັນ ພະຍານ; ແຕ່ ເພາະ ຄວາມ ຊົ່ວ
ຮ້າຍ ເລື່ອງນີ້ຈຶ່ງບໍ່ມີຢູ່ໃນບັນດາລູກຫລານ
ມະນຸດ.
24 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ຊາຕານ ໄດ້ອອກໄປພົ້ນໜ້າຂອງໂມເຊ
ແລ້ວ, ຄືໂມເຊໄດ້ແຫງນໜ້າຂຶ້ນຫລຽວເບິ່ງ
ຟ້າສະຫວັນ, ໂດຍເຕັມໄປດ້ວຍ [ກ]ພຣະວິນ
ຍານບໍລິສຸດ, ຊຶ່ງເປັນພະຍານເຖິງພຣະ
ບິດາ ແລະ ພຣະບຸດ;
25 ແລະ ໂດຍທີ່ເອີ້ນຫາພຣະນາມຂອງ
ພຣະເຈົ້າ, ເພິ່ນໄດ້ເຫັນລັດສະໝີພາບຂອງ
ພຣະອົງອີກ; ເພາະມັນໄດ້ຢູ່ກັບເພິ່ນ; ແລະ
ເພິ່ນໄດ້ຍິນສຸລະສຽງຂອງພຣະອົງ, ກ່າວ
ວ່າ: ເຈົ້າເປັນສຸກແລ້ວ, ໂມເຊ, ເພາະເຮົາ,
ຜູ້ຊົງລິດອຳນາດຍິ່ງໃຫຍ່, ໄດ້ເລືອກເຈົ້າ
ແລ້ວ, ແລະ ເຈົ້າຈະຖືກເຮັດໃຫ້ເຂັ້ມແຂງ
ຫລາຍກວ່າ [ກ]ແມ່ນ້ຳທັງຫລາຍ; ເພາະວ່າ
ມັນຈະເຊື່ອຟັງ [ຂ]ຄຳສັ່ງຂອງເຈົ້າຄືກັບວ່າ
ເຈົ້າເປັນ [ຄ]ພຣະເຈົ້າ.
26 ແລະ ເບິ່ງແມ, ເຮົາຢູ່ນຳເຈົ້າ, ແມ່ນ
ແຕ່ ຈົນ ເຖິງ ທີ່ ສຸດ ຂອງ ວັນ ເວລາ ຂອງ
ເຈົ້າ; ເພາະວ່າເຈົ້າຈະ [ກ]ປົດປ່ອຍຜູ້ຄົນ
ຂອງເຮົາຈາກ [ຂ]ຄວາມເປັນທາດ, ແມ່ນ
ແຕ່ [ຄ]ອິດສະຣາເອນ [ງ]ຜູ້ທີ່ຖືກເລືອກຂອງ
ເຮົາ.
27 ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນ
ຂະນະທີ່ສຸລະສຽງຍັງບໍ່ຂາດຄຳ, ໂມເຊໄດ້
ກວາດ ຕາ ເບິ່ງ ແລະ [ກ]ໄດ້ ເຫັນ ແຜ່ນ ດິນ
ໂລກ, ແທ້ຈິງແລ້ວ, ແມ່ນແຕ່ທັງໝົດ; ແລະ
ບໍ່ມີພາກສ່ວນໃດຂອງມັນທີ່ເພິ່ນບໍ່ໄດ້ເຫັນ,
ໂດຍໄດ້ຫລິງເຫັນມັນດ້ວຍພຣະວິນຍານ
ຂອງພຣະເຈົ້າ.
28 ແລະ ເພິ່ນ ໄດ້ ເຫັນ ຜູ້ ອາ ໄສ ຢູ່ ໃນ
ນັ້ນນຳອີກ, ແລະ ບໍ່ມີຄົນໃດທີ່ເພິ່ນບໍ່ໄດ້
ເຫັນ; ແລະ ເພິ່ນໄດ້ຫລິງເຫັນພວກເຂົາ
ດ້ວຍພຣະວິນຍານຂອງພຣະເຈົ້າ; ແລະ
ຈຳນວນຂອງພວກເຂົານັ້ນແມ່ນຫລວງ
ຫລາຍ, ແມ່ນແຕ່ເກີນກວ່າຈະນັບໄດ້ດັ່ງ
ເມັດຊາຍຢູ່ເທິງຝັ່ງທະເລ.
29 ແລະ ເພິ່ນໄດ້ເຫັນພື້ນດິນຢ່າງຫລວງ
ຫລາຍ; ແລະ ພື້ນດິນແຕ່ລະແຫ່ງຖືກເອີ້ນ
ວ່າ [ກ]ແຜ່ນດິນໂລກ, ແລະ ມີຜູ້ອາໄສຢູ່ເທິງ
ນັ້ນ.
30 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ໂມເຊໄດ້ເອີ້ນຫາພຣະເຈົ້າ, ໂດຍກ່າວວ່າ:
ຂໍຊົງບອກຂ້າພຣະອົງແດ່ທ້ອນ, ດ້ວຍເຫດ
ໃດສິ່ງເຫລົ່ານີ້ຈຶ່ງເປັນເຊັ່ນນີ້, ແລະ ພຣະ
ອົງໄດ້ສ້າງສິ່ງເຫລົ່ານີ້ດ້ວຍສິ່ງໃດ?
31 ແລະ ຈົ່ງ ເບິ່ງ, ລັດສະໝີພາບຂອງ
ພຣະຜູ້ເປັນເຈົ້າໄດ້ຢູ່ກັບໂມເຊ, ເພື່ອວ່າ
ໂມເຊຈະໄດ້ຢືນຢູ່ໃນທີ່ປະທັບຢູ່ຂອງພຣະ
ເຈົ້າ, ແລະ ໄດ້ເວົ້າລົມກັບພຣະອົງ [ກ]ໜ້າຕໍ່
ໜ້າ. ແລະ ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບ
ໂມເຊວ່າ: ເພື່ອ [ຂ]ຈຸດປະສົງຂອງເຮົາເອງທີ່

22 *ກ* ມທ 13:41–42; ມຊຢ 16:1–3.
24 *ກ* ຄມພ ພຣະວິນຍານບໍລິສຸດ.
25 *ກ* ອພຍ 14:21–22.
*ຂ* ຄມພ ຖານະປະໂລຫິດ; ອຳນາດ.
*ຄ* ອພຍ 4:16.
26 *ກ* ອພຍ 3:7–12.
*ຂ* 1 ນຟ 17:23–25.
*ຄ* 1 ກສ 8:51–53. ຄມພ ອິດສະຣາເອນ.
*ງ* ຄມພ ຜູ້ທີ່ຖືກເລືອກ.
27 *ກ* ຄພ 88:47; ມຊ 1:8. ຄມພ ພາບນິມິດ.
29 *ກ* ຄມພ ແຜ່ນດິນໂລກ.
31 *ກ* ພບຍ 5:4; ມຊ 1:11.
*ຂ* ອຊຢ 45:17–18; 2 ນຟ 2:14–15.

ເຮົາໄດ້ສ້າງສິ່ງເຫລົ່ານີ້ຂຶ້ນມາ. ນີ້ຄືປັນຍາ
ແລະ ຈຸດປະສົງທີ່ຢູ່ໃນເຮົາ.
32 ແລະ ໂດຍ [ກ]ຄຳ ແຫ່ງອຳນາດຂອງ
ເຮົາ, ເຮົາຈຶ່ງໄດ້ສ້າງມັນຂຶ້ນມາ, ຊຶ່ງຄືພຣະ
ບຸດອົງດຽວທີ່ຖືກກຳເນີດຂອງເຮົາ, ຜູ້ທີ່ເຕັມ
ໄປດ້ວຍ [ຂ]ພຣະຄຸນ ແລະ [ຄ]ຄວາມຈິງ.
33 ແລະ [ກ]ໂລກຕ່າງໆຈົນນັບບໍ່ຖ້ວນ ເຮົາ
ໄດ້ [ຂ]ສ້າງຂຶ້ນມາ; ແລະ ເຮົາຍັງໄດ້ສ້າງມັນ
ເພື່ອຈຸດປະສົງຂອງເຮົາເອງນຳອີກ; ແລະ
ໂດຍພຣະບຸດ ເຮົາໄດ້ສ້າງມັນຂຶ້ນມາ, ຊຶ່ງ
ຄື [ຄ]ພຣະອົງດຽວທີ່ຖືກກຳເນີດຂອງເຮົາ.
34 ແລະ ມະນຸດຄົນ [ກ]ທຳອິດ ເຮົາໄດ້
ເອີ້ນວ່າ [ຂ]ອາດາມ, ຊຶ່ງຄື [ຄ]ຫລວງຫລາຍ.
35 ແຕ່ເລື່ອງລາວຂອງແຜ່ນດິນໂລກນີ້
ເທົ່ານັ້ນ, ແລະ ຜູ້ອາໄສຢູ່ໃນນັ້ນ, ເຮົາໃຫ້
ແກ່ເຈົ້າ. ເພາະຈົ່ງເບິ່ງ, ມີຫລາຍໂລກທີ່
ສູນສິ້ນໄປໂດຍຄຳແຫ່ງອຳນາດຂອງເຮົາ.
ແລະ ມີຫລາຍໂລກທີ່ຕັ້ງຢູ່ດຽວນີ້, ແລະ ມີ
ຈົນນັບບໍ່ຖ້ວນຕໍ່ມະນຸດ; ແຕ່ວ່າທຸກສິ່ງທັງ
ປວງໄດ້ຖືກນັບໄວ້ສຳລັບເຮົາ, ເພາະວ່າ
ມັນເປັນຂອງເຮົາ ແລະ ເຮົາ [ກ]ຮູ້ຈັກມັນ.
36 ແລະ ເຫດການໄດ້ບັງເກີດຂຶ້ນຄື
ໂມເຊໄດ້ກ່າວກັບພຣະຜູ້ເປັນເຈົ້າ, ໂດຍ
ກ່າວວ່າ: ຂໍຈົ່ງເມດຕາຜູ້ຮັບໃຊ້ຂອງພຣະ
ອົງດ້ວຍເທີ້ນ, ໂອ້ ພຣະອົງເຈົ້າ, ແລະ ຂໍຈົ່ງ
ບອກຂ້າພຣະອົງກ່ຽວກັບແຜ່ນດິນໂລກນີ້,
ແລະ ຜູ້ອາໄສຢູ່ໃນນັ້ນ, ແລະ ຟ້າສະຫວັນ
ນຳອີກ, ແລະ ຈາກນັ້ນຜູ້ຮັບໃຊ້ຂອງພຣະ
ອົງຈະພໍໃຈ.
37 ແລະ ອົງພຣະຜູ້ເປັນເຈົ້າໄດ້ກ່າວກັບ
ໂມເຊວ່າ: [ກ]ຟ້າສະຫວັນນັ້ນ, ມີຢ່າງຫລວງ
ຫລາຍ, ແລະ ນັບບໍ່ໄດ້ສຳລັບມະນຸດ; ແຕ່
ວ່ານັບມັນໄດ້ສຳລັບເຮົາ, ເພາະວ່າມັນເປັນ
ຂອງເຮົາ.
38 ແລະ ດັ່ງທີ່ແຜ່ນດິນໂລກໜຶ່ງຈະສູນ
ສິ້ນໄປ, ແລະ ຟ້າສະຫວັນຂອງມັນສັນໃດ,
ອັນໃໝ່ອີກອັນໜຶ່ງຈະບັງເກີດຂຶ້ນສັນນັ້ນ;
ແລະ ບໍ່ມີທີ່ [ກ]ສິ້ນສຸດກັບວຽກງານຂອງເຮົາ,
ທັງຖ້ອຍຄຳຂອງເຮົາກໍຄືກັນ.
39 ເພາະຈົ່ງເບິ່ງ, ນີ້ຄື [ກ]ວຽກງານຂອງ
ເຮົາ ແລະ [ຂ]ລັດສະໝີພາບຂອງເຮົາ—ຄື
ການທີ່ຈະເຮັດໃຫ້ເກີດຄວາມເປັນ [ຄ]ອະມະ
ຕະ ແລະ ຊີວິດ [ງ]ນິລັນດອນຂອງມະນຸດ.
40 ແລະ ບັດນີ້, ໂມເຊ, ບຸດຂອງເຮົາ,
ເຮົາຈະກ່າວກັບເຈົ້າກ່ຽວກັບແຜ່ນດິນໂລກ
ນີ້ ຊຶ່ງຢູ່ເທິງນັ້ນເຈົ້າຈະຢືນຢູ່; ແລະ ເຈົ້າຈະ
[ກ]ຂຽນເລື່ອງທີ່ເຮົາຈະກ່າວ.
41 ແລະ ໃນວັນທີ່ລູກຫລານມະນຸດຈະ
ຖືວ່າຖ້ອຍຄຳຂອງເຮົາບໍ່ມີຄຸນຄ່າ ແລະ
[ກ]ເອົາຫລາຍຄຳອອກໄປຈາກໜັງສືທີ່ເຈົ້າ
ຈະຂຽນ, ຈົ່ງເບິ່ງ, ເຮົາຈະຍົກອີກຄົນໜຶ່ງ
ຂຶ້ນ [ຂ]ເໝືອນກັບເຈົ້າ; ແລະ [ຄ]ມັນຈະມີອີກ
ຢູ່ໃນບັນດາລູກຫລານມະນຸດ—ໃນບັນດາ
ຫລາຍຕໍ່ຫລາຍຄົນທີ່ຈະເຊື່ອ.

---

32 ກ ຢຮ 1:1–4, 14; ຮຣ 1:1–3;
ພນມ 19:13; ຢຄ 4:9;
ມຊ 2:1, 5.
ຄມພ ພຣະເຢຊູຄຣິດ.
ຂ ພສສ 19:1; ມຊ 5:7–8.
ຄມພ ພຣະຄຸນ.
ຄ ຄມພ ຈິງ, ຄວາມຈິງ.
33 ກ ພສສ 8:3–4;
ຄພ 76:24;
ມຊ 7:29–30.
ຂ ຄມພ ສ້າງ, ການສ້າງ.
ຄ ມຊ 1:6.
34 ກ ມຊ 3:7.
ຂ ອຣຣ 1:3.
ຄມພ ອາດາມ.
ຄ ມຊ 4:26; 6:9.
35 ກ ມຊ 1:6; 7:36.
ຄມພ ຮອບຮູ້ທຸກຢ່າງ.
37 ກ ອຣຣ 4:1.
ຄມພ ສະຫວັນ.
38 ກ ມຊ 1:4.
39 ກ ຣມ 8:16–17;
2 ນຟ 2:14–15.
ຄມພ ແຜນແຫ່ງການໄຖ່.
ຂ ຄມພ ລັດສະໝີພາບ.
ຄ ຄມພ ອະມະຕະ, ຄວາມ
ເປັນອະມະຕະ.
ງ ຄມພ ຊີວິດນິລັນດອນ.
40 ກ 2 ນຟ 29:11–12.
41 ກ 1 ນຟ 13:23–32; ມຊ 1:23.
ຂ 2 ນຟ 3:7–19.
ຄ 1 ນຟ 13:32, 39–40;
ຄພ 9:2.

42 (ຖ້ອຍ ຄຳ ເຫລົ່າ ນີ້ ໄດ້ ຖືກ [ກ]ກ່າວ ກັບ
ໂມເຊຢູ່ ເທິງພູ, ຊຶ່ງຊື່ຂອງ ມັນຈະບໍ່ເປັນທີ່
ຮູ້ຈັກໃນບັນດາລູກຫລານມະນຸດ. ແລະ
ບັດນີ້ ມັນ ໄດ້ ຖືກກ່າວກັບ ເຈົ້າແລ້ວ. ຢ່າ
ສະແດງ ມັນກັບຄົນໃດ ຍົກເວັ້ນ ແຕ່ຄົນທີ່
ເຊື່ອ. ແມ່ນເປັນດັ່ງນັ້ນ. ອາແມນ.)

## ບົດທີ 2

(ເດືອນມິຖຸນາ–ເດືອນຕຸລາ 1830)

*ພຣະເຈົ້າ ສ້າງ ຟ້າສະຫວັນ ແລະ ແຜ່ນດິນ ໂລກ—ສິ່ງທີ່ມີຊີວິດທຸກຮູບແບບໄດ້ຖືກສ້າງຂຶ້ນ—ພຣະເຈົ້າສ້າງມະນຸດ ແລະ ມອບສິດຄອບຄອງທຸກສິ່ງທັງປວງໃຫ້ແກ່ລາວ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ ເປັນ ເຈົ້າ ໄດ້ ກ່າວ ກັບ ໂມ ເຊ, ໂດຍ ກ່າວ
ວ່າ: ຈົ່ງເບິ່ງ, ເຮົາ [ກ]ເປີດເຜີຍ ແກ່ເຈົ້າກ່ຽວ
ກັບ [ຂ]ຟ້າສະຫວັນ, ແລະ [ຄ]ແຜ່ນດິນໂລກນີ້;
ຈົ່ງຂຽນຖ້ອຍຄຳທີ່ເຮົາກ່າວ. ເຮົາເປັນຕົ້ນ
ແລະ ທີ່ສຸດ, [ງ]ພຣະເຈົ້າຜູ້ຊົງລິດອຳນາດ
ຍິ່ງໃຫຍ່; ໂດຍ [ຈ]ພຣະອົງດຽວທີ່ຖືກກຳເນີດ
ຂອງເຮົາ, ເຮົາໄດ້ [ສ]ສ້າງສິ່ງເຫລົ່ານີ້; ແທ້ຈິງ
ແລ້ວ, ໃນຕອນຕົ້ນເຮົາໄດ້ນິລະມິດສ້າງຟ້າ
ສະຫວັນ, ແລະ ແຜ່ນດິນໂລກຊຶ່ງເທິງນັ້ນ
ເຈົ້າຢືນຢູ່.
2 ແລະ [ກ]ແຜ່ນ ດິນ ໂລກ ຍັງ ບໍ່ ທັນ ມີ ຮູບ
ຮ່າງ, ແລະ ຍັງວ່າງເປົ່າຢູ່; ແລະ ເຮົາໄດ້
ເຮັດໃຫ້ຄວາມມືດຫຸ້ມຫໍ່ມະຫາສະໝຸດອັນ
ກວ້າງ ໃຫຍ່ ໄພ ສານ; ແລະ ພຣະ ວິນ ຍານ
ຂອງເຮົາໄດ້ວົນວຽນຢູ່ເທິງໜ້ານ້ຳ; ເພາະ
ເຮົາຄືພຣະເຈົ້າ.
3 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວວ່າ: ໃຫ້
[ກ]ຄວາມ ສະ ຫວ່າງສ່ອງຂຶ້ນ; ແລະ ຄວາມ
ສະຫວ່າງກໍສ່ອງຂຶ້ນ.
4 ແລະ ເຮົາ, ພຣະເຈົ້າ, ໄດ້ເຫັນຄວາມ
ສະຫວ່າງ; ແລະ ຊົມຄວາມສະຫວ່າງນັ້ນ
ດ້ວຍ [ກ]ຄວາມພໍໃຈ. ແລະ ເຮົາ, ພຣະເຈົ້າ,
ໄດ້ແຍກຄວາມສະຫວ່າງອອກຈາກຄວາມ
ມືດ.
5 ແລະ ເຮົາ, ພຣະເຈົ້າ, ໄດ້ເອີ້ນຄວາມ
ສະ ຫວ່າງ ນັ້ນ ວ່າ ກາງ ເວັນ; ແລະ ຄວາມ
ມືດນັ້ນ, ເຮົາເອີ້ນມັນວ່າ ກາງຄືນ; ແລະ ສິ່ງ
ນີ້ເຮົາໄດ້ເຮັດໂດຍ [ກ]ຄຳແຫ່ງອຳນາດຂອງ
ເຮົາ, ແລະ ກໍເປັນດັ່ງທີ່ເຮົາ [ຂ]ກ່າວ; ແລະ ມື້
ຄືນຜ່ານໄປ ແລະ ມື້ເຊົ້າຕ່າວມາ ນັ້ນແມ່ນ
[ຄ]ມື້ທີໜຶ່ງ.
6 ແລະ ອີກເທື່ອໜຶ່ງ, ເຮົາ, ພຣະເຈົ້າ, ໄດ້
ກ່າວວ່າ: ໃຫ້ມີ [ກ]ທ້ອງນະພາ, ແລະ ມັນກໍ
ໄດ້ເກີດຂຶ້ນ, ແມ່ນແຕ່ດັ່ງທີ່ເຮົາກ່າວ; ແລະ
ເຮົາ ໄດ້ ກ່າວ ວ່າ: ໃຫ້ນ້ຳ ແຍກ ອອກ ເປັນ
ສອງສ່ວນ; ແລະ ກໍເປັນດັ່ງນັ້ນ;
7 ແລະ ເຮົາ, ພຣະເຈົ້າ, ໄດ້ນິລະມິດສ້າງ
ທ້ອງນະພາ ແລະ ແຍກ [ກ]ນ້ຳອອກຈາກກັນ,
ແທ້ຈິງແລ້ວ, ນ້ຳທີ່ຢູ່ເທິງທ້ອງນະພາ ແລະ
ນ້ຳທີ່ຢູ່ລຸ່ມທ້ອງນະພາ, ແລະ ກໍເປັນດັ່ງນັ້ນ
ແມ່ນແຕ່ດັ່ງທີ່ເຮົາກ່າວ.
8 ແລະ ເຮົາ, ພຣະເຈົ້າ, ໄດ້ເອີ້ນທ້ອງນະ
ພານັ້ນວ່າ [ກ]ຟ້າສະຫວັນ; ແລະ ມື້ຄືນຜ່ານ
ໄປ ແລະ ມື້ເຊົ້າຕ່າວມາ ນັ້ນແມ່ນມື້ທີສອງ.

---

42 *ກ* ມຊ 1:1.
**2** 1 *ກ* ມຊ 1:30, 36.
*ຂ* ຄມພ ສະຫວັນ.
*ຄ* ມຊ 1:8.
*ງ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ຈ* ຄມພ ອົງດຽວທີ່ຖືກກຳເນີດ.
*ສ* ຄມພ ສ້າງ, ການສ້າງ.
2 *ກ* ປຖກ 1:2; ອຣຮ 4:2.
3 *ກ* ຄພ 88:6–13. ຄມພ ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.
4 *ກ* ປຖກ 1:4; ອຣຮ 4:4.
5 *ກ* ມຊ 1:32.
*ຂ* 2 ກຣທ 4:6.
*ຄ* ປຖກ 1:5.
6 *ກ* ປຖກ 1:6–8.
7 *ກ* ອຣຮ 4:9–10.
8 *ກ* ຄມພ ສະຫວັນ.

9 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວ ວ່າ:
ໃຫ້ນ້ຳທີ່ຢູ່ລຸ່ມຟ້າສະຫວັນ ມາ ໂຮມ ກັນ
ຢູ່ [ກ]ບ່ອນດຽວ, ແລະ ກໍເປັນດັ່ງນັ້ນ; ແລະ
ເຮົາ, ພຣະເຈົ້າ, ໄດ້ກ່າວວ່າ: ໃຫ້ພື້ນດິນ
ປະກົດຂຶ້ນ; ແລະ ກໍເປັນດັ່ງນັ້ນ.
10 ແລະ ເຮົາ, ພຣະເຈົ້າ, ໄດ້ເອີ້ນພື້ນ
ດິນວ່າ [ກ]ແຜ່ນດິນໂລກ; ແລະ ບ່ອນທີ່ນ້ຳ
ມາໂຮມກັນນັ້ນ, ເຮົາໄດ້ເອີ້ນວ່າ ມະຫາສະ
ໝຸດ; ແລະ ເຮົາ, ພຣະເຈົ້າ, ໄດ້ຊົມສິ່ງທີ່ໄດ້
ນິລະມິດສ້າງຂຶ້ນມາແລ້ວກໍພໍໃຈ.
11 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວວ່າ:
ໃຫ້ແຜ່ນດິນໂລກເກີດ [ກ]ພືດທຸກຊະນິດ,
ທັງແນວເປັນເມັດ, ແລະ ແນວເປັນໝາກ,
ຕາມຊະນິດຂອງມັນ, ແລະ ຕົ້ນໄມ້ເກີດ
ໝາກ, ຊຶ່ງເມັດຂອງມັນຢູ່ໃນຕົວຂອງມັນ
ເອງຢູ່ເທິງແຜ່ນດິນໂລກ, ແລະ ກໍເປັນດັ່ງ
ນັ້ນ ແມ່ນແຕ່ດັ່ງທີ່ເຮົາກ່າວ.
12 ແລະ ແຜ່ນດິນໂລກຈຶ່ງເກີດພືດທຸກ
ຊະນິດ, ທັງແນວເປັນເມັດ, ແລະ ແນວເປັນ
ໝາກ, ຕາມຊະນິດຂອງມັນ, ແລະ ຕົ້ນໄມ້ກໍ
ເກີດໝາກ, ຊຶ່ງເມັດຂອງມັນຢູ່ໃນຕົວຂອງ
ມັນເອງຕາມຊະນິດຂອງມັນ; ແລະ ເຮົາ,
ພຣະເຈົ້າ, ໄດ້ຊົມສິ່ງທີ່ໄດ້ນິລະມິດສ້າງຂຶ້ນ
ມາແລ້ວກໍພໍໃຈ;
13 ແລະ ມື້ຄືນຜ່ານໄປ ແລະ ມື້ເຊົ້າຕ່າວ
ມາ ນັ້ນແມ່ນມື້ທີສາມ.
14 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວ ວ່າ:
ໃຫ້ມີດວງແຈ້ງໃນທ້ອງນະພາ ແຫ່ງຟ້າ
ສະຫວັນ, ເພື່ອແຍກກາງເວັນຈາກກາງຄືນ,
ແລະ ໃຫ້ກຳນົດເວລາຂອງມື້, ປີ, ແລະ ລະ
ດູການ;
15 ແລະ ເພື່ອ ໃຫ້ ມັນ ເປັນ ຄວາມ ສະ
ຫວ່າງ ໃນທ້ອງນະພາ ແຫ່ງ ຟ້າ ສະຫວັນ
ເພື່ອໃຫ້ສ່ອງແສງລົງມາສູ່ແຜ່ນດິນໂລກ;
ແລະ ກໍເປັນດັ່ງນັ້ນ.
16 ແລະ ເຮົາ, ພຣະເຈົ້າ, ໄດ້ນິລະມິດ
ສ້າງ [ກ]ດວງແຈ້ງສອງດວງ; ດວງທີ່ມີຄວາມ
ສະຫວ່າງຫລາຍກວ່າໃຫ້ປົກຄອງກາງ
ເວັນ, ແລະ ດວງທີ່ມີຄວາມສະຫວ່າງໜ້ອຍ
ກວ່າໃຫ້ປົກຄອງກາງຄືນ, ແລະ ດວງທີ່
ມີຄວາມສະຫວ່າງຫລາຍກວ່າຄືດວງຕາ
ເວັນ, ແລະ ດວງທີ່ມີຄວາມສະຫວ່າງໜ້ອຍ
ກວ່າຄືດວງເດືອນ; ແລະ ໄດ້ນິລະມິດສ້າງ
ດວງດາວອື່ນໆນຳອີກ ແມ່ນແຕ່ຕາມຄຳ
ຂອງເຮົາ.
17 ແລະ ເຮົາ, ພຣະເຈົ້າ, ໄດ້ວາງດວງ
ແຈ້ງໄວ້ໃນທ້ອງນະພາແຫ່ງຟ້າສະຫວັນ
ໃຫ້ສ່ອງແສງລົງມາສູ່ແຜ່ນດິນໂລກ,
18 ແລະ ດວງຕາເວັນໃຫ້ປົກຄອງກາງ
ເວັນ, ແລະ ດວງເດືອນໃຫ້ປົກຄອງກາງ
ຄືນ, ແລະ ໃຫ້ແຍກແຈ້ງຈາກມືດ; ແລະ
ເຮົາ, ພຣະເຈົ້າ, ໄດ້ຊົມສິ່ງທີ່ໄດ້ນິລະມິດ
ສ້າງຂຶ້ນມາແລ້ວກໍພໍໃຈ;
19 ແລະ ມື້ຄືນຜ່ານໄປ ແລະ ມື້ເຊົ້າຕ່າວ
ມາ ນັ້ນແມ່ນມື້ທີສີ່.
20 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວວ່າ:
ໃຫ້ສັດຫລາຍຈຳພວກເກີດຂຶ້ນຢູ່ໃນນ້ຳ,
ແລະ ໃຫ້ມີນົກບິນໄປມາໃນທ້ອງນະພາ
ແຫ່ງຟ້າສະຫວັນ.
21 ແລະ ເຮົາ, ພຣະເຈົ້າ, ໄດ້ນິລະມິດ
ສ້າງ [ກ]ປາວານຂະໜາດໃຫຍ່, ແລະ ສັດ
ທຸກຊະນິດທີ່ເຄື່ອນຍ້າຍ, ຊຶ່ງເຕັມຢູ່ຢ່າງ
ອຸດົມສົມບູນໃນຜືນນ້ຳ, ຕາມຊະນິດຂອງ
ມັນ, ແລະ ສັດມີປີກທຸກຕົວ ຕາມຊະນິດ
ຂອງມັນ; ແລະ ເຮົາ, ພຣະເຈົ້າ, ເຫັນວ່າສິ່ງ
ທັງປວງທີ່ເຮົາໄດ້ສ້າງໄວ້ນັ້ນດີ.

9 *ກ* ປຖກ 1:9; ອຣຣ 4:9.
10 *ກ* ຄມພ ແຜ່ນດິນໂລກ.
11 *ກ* ປຖກ 1:11–12; ອຣຣ 4:11–12.
16 *ກ* ປຖກ 1:16.
21 *ກ* ປຖກ 1:21; ອຣຣ 4:21.

22 ແລະ ເຮົາ, ພຣະເຈົ້າ, ໄດ້ອວຍພອນ
ມັນ, ໂດຍກ່າວວ່າ: ໃຫ້ພາກັນ [ກ]ອອກແມ່
ແຜ່ລູກຫລາຍຢູ່ເຕັມມະຫາສະໝຸດ; ແລະ
ທັງໃຫ້ຝູງນົກແຜ່ຜາຍຂະຫຍາຍພັນຫລາຍ
ຂຶ້ນຢູ່ໃນແຜ່ນດິນໂລກ;
23 ແລະ ມື້ຄືນຜ່ານໄປ ແລະ ມື້ເຊົ້າຕ່າວ
ມາ ນັ້ນແມ່ນມື້ທີຫ້າ.
24 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວວ່າ:
ໃຫ້ມີສັດຈຳພວກຕ່າງໆຢູ່ເທິງແຜ່ນດິນ
ໂລກຕາມຊະນິດຂອງມັນ, ສັດບ້ານ, ແລະ
ສັດຍ່າງຍ້າຍເລືອຄານ, ແລະ ສັດປ່າເກີດ
ຂຶ້ນທົ່ວແຜ່ນດິນໂລກຕາມຊະນິດຂອງມັນ,
ແລະ ກໍເປັນດັ່ງນັ້ນ;
25 ແລະ ເຮົາ, ພຣະເຈົ້າ, ໄດ້ນິລະມິດ
ສ້າງສັດປ່າຢູ່ເທິງແຜ່ນດິນໂລກຕາມຊະ
ນິດຂອງມັນ, ແລະ ສັດບ້ານຕາມຊະນິດ
ຂອງມັນ, ແລະ ສັດຍ່າງຍ້າຍເລືອຄານຢູ່
ເທິງແຜ່ນດິນໂລກຕາມຊະນິດຂອງມັນ;
ແລະ ເຮົາ, ພຣະເຈົ້າ, ໄດ້ຊົມສິ່ງທີ່ໄດ້ນິລະ
ມິດສ້າງຂຶ້ນມາແລ້ວກໍພໍໃຈ.
26 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວກັບ
[ກ]ພຣະອົງດຽວທີ່ຖືກກຳເນີດຂອງເຮົາ, ຊຶ່ງ
ໄດ້ຢູ່ກັບເຮົາຕັ້ງແຕ່ຕົ້ນວ່າ: ໃຫ້ພວກເຮົານິ
ລະມິດ [ຂ]ສ້າງມະນຸດໃຫ້ເປັນ [ຄ]ຮູບລັກສະ
ນະໃຫ້ຄ້າຍຄືພວກເຮົາ, ຕາມລັກສະນະ
ຂອງພວກເຮົາ; ແລະ ກໍເປັນດັ່ງນັ້ນ. ແລະ
ເຮົາ, ພຣະເຈົ້າ, ໄດ້ກ່າວວ່າ: ໃຫ້ພວກເຂົາ
[ງ]ມີອຳນາດເໜືອປາໃນນ້ຳ, ແລະ ເໜືອນົກ
ໃນອາກາດ, ແລະ ເໜືອສັດທັງໝົດ, ແລະ
ເໜືອທັງແຜ່ນດິນໂລກ, ແລະ ເໜືອສັດ
ຍ່າງຍ້າຍເລືອຄານທຸກຊະນິດຢູ່ເທິງແຜ່ນ
ດິນໂລກ.
27 ແລະ ເຮົາ, [ກ]ພຣະເຈົ້າ, ໄດ້ນິລະມິດ
ສ້າງມະນຸດໃຫ້ເປັນຮູບລັກສະນະໃຫ້ຄ້າຍ
ຄືເຮົາເອງ, ໃນຮູບລັກສະນະຂອງພຣະອົງ
ດຽວທີ່ຖືກກຳເນີດຂອງເຮົາ ຊຶ່ງເຮົາໄດ້ສ້າງ;
ເຮົາໄດ້ສ້າງພວກເຂົາໃຫ້ເປັນຊາຍ ແລະ
ຍິງ.
28 ແລະ ເຮົາ, ພຣະເຈົ້າ, ໄດ້ອວຍພອນ
ພວກເຂົາ, ແລະ ໄດ້ກ່າວກັບພວກເຂົາວ່າ:
ຈົ່ງມີລູກດົກໃຫ້ [ກ]ແຜ່ຂະຫຍາຍຫລາຍ,
ແລະ ເພີ່ມຫລາຍຂຶ້ນຈົນເຕັມແຜ່ນດິນ
ໂລກ, ແລະ ປົກຄອງມັນ, ແລະ ມີອຳນາດ
ເໜືອປາໃນນ້ຳ, ແລະ ເໜືອນົກໃນອາ
ກາດ, ສັດທຸກຊະນິດທີ່ເຄື່ອນຍ້າຍຢູ່ເທິງ
ແຜ່ນດິນໂລກ.
29 ແລະ ເຮົາ, ພຣະເຈົ້າ, ໄດ້ກ່າວກັບ
ມະນຸດວ່າ: ຈົ່ງເບິ່ງ, ເຮົາໃຫ້ພືດເປັນເມັດ
ທຸກຊະນິດ, ຊຶ່ງມີຢູ່ຕະຫລອດທົ່ວແຜ່ນດິນ
ໂລກ, ແລະ ຕົ້ນໄມ້ທັງໝົດ ແລະ ໝາກ
ຂອງມັນແກ່ເຈົ້າເພື່ອເປັນ [ກ]ອາຫານ.
30 ແລະ ສຳລັບສັດປ່າຢູ່ໃນແຜ່ນດິນ
ໂລກ, ແລະ ສຳລັບນົກຢູ່ໃນອາກາດ, ແລະ
ສຳລັບສັດຍ່າງຍ້າຍເລືອຄານທຸກຊະນິດຢູ່
ໃນແຜ່ນດິນໂລກ, ຊຶ່ງໃນການນີ້ເຮົາຈະໃຫ້
ຫຍ້າກັບພືດເປັນອາຫານ; ແລະ ກໍເປັນດັ່ງ
ນັ້ນ, ແມ່ນແຕ່ ດັ່ງທີ່ເຮົາກ່າວ.
31 ແລະ ເຮົາ, ພຣະເຈົ້າ, ໄດ້ຊົມທຸກໆສິ່ງ
ທີ່ໄດ້ນິລະມິດສ້າງຂຶ້ນມາ, ແລະ, ຈົ່ງເບິ່ງ,
ທຸກສິ່ງທີ່ໄດ້ນິລະມິດສ້າງຂຶ້ນມາແລ້ວກໍ [ກ]ພໍ
ໃຈຫລາຍ; ແລະ ມື້ຄືນຜ່ານໄປ ແລະ ມື້ເຊົ້າ
ຕ່າວມາ ນັ້ນແມ່ນມື້ [ຂ]ທີຫົກ.

22 *ກ* ປຖກ 1:22–25; ອຣຣ 4:22–25.
26 *ກ* ຄມພ ພຣະເຢຊູຄຣິດ.
*ຂ* ຄມພ ສ້າງ, ການສ້າງ.
*ຄ* ປຖກ 1:26–27; ມຊ 6:8–10; ອຣຣ 4:26–27.
*ງ* ປຖກ 1:28; ມຊ 5:1; ອຣຣ 4:28.
27 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
28 *ກ* ມຊ 5:2.
29 *ກ* ປຖກ 1:29–30; ອຣຣ 4:29–30.
31 *ກ* ປຖກ 1:31; ຄພ 59:16–20.
*ຂ* ອພຍ 20:11; ອຣຣ 4:31.

## ບົດທີ 3

(ເດືອນມິຖຸນາ–ເດືອນຕຸລາ 1830)

*ພຣະເຈົ້າສ້າງທຸກສິ່ງທັງປວງທາງວິນຍານກ່ອນມັນຈະເປັນຢູ່ທາງທຳມະຊາດຢູ່ເທິງແຜ່ນດິນໂລກ—ພຣະອົງສ້າງຜູ້ຊາຍ, ເນື້ອໜັງຄົນທຳອິດ, ຢູ່ເທິງແຜ່ນດິນໂລກ—ຜູ້ຍິງເປັນຜູ້ຊ່ວຍຊູທີ່ເໝາະສົມສຳລັບຜູ້ຊາຍ.*

1 ຟ້າສະຫວັນ ແລະ ແຜ່ນດິນໂລກຈຶ່ງ
[ກ]ສຳເລັດເສັດສິ້ນດັ່ງນັ້ນ, ແລະ [ຂ]ໄພ່ພົນທັງ
ປວງຂອງມັນ.
2 ແລະ ໃນມື້ທີເຈັດ ເຮົາ, ພຣະເຈົ້າ, ໄດ້
ຢຸດວຽກງານຂອງເຮົາ, ແລະ ທຸກສິ່ງທັງ
ປວງທີ່ເຮົາໄດ້ນິລະມິດສ້າງ; ແລະ ເຮົາໄດ້
[ກ]ພັກຜ່ອນໃນ [ຂ]ມື້ທີເຈັດຈາກວຽກງານຂອງ
ເຮົາ, ແລະ ໄດ້ສຳເລັດທຸກສິ່ງທີ່ເຮົາໄດ້ນິ
ລະມິດສ້າງ, ແລະ ເຮົາ, ພຣະເຈົ້າ, ໄດ້ຊົມ
ສິ່ງທີ່ໄດ້ນິລະມິດສ້າງຂຶ້ນມາແລ້ວກໍພໍໃຈ;
3 ແລະ ເຮົາ, ພຣະເຈົ້າ, ໄດ້ [ກ]ອວຍພອນ
ມື້ທີເຈັດ, ແລະ ໄດ້ຊຳລະມັນໃຫ້ບໍລິສຸດ;
ເພາະຮອດມື້ນີ້ທີ່ເຮົາໄດ້ສຳເລັດການນິ
ລະມິດສ້າງ ແລະ ຢຸດ [ຂ]ວຽກງານທັງສິ້ນ
ຊຶ່ງເຮົາ, ພຣະເຈົ້າ, ໄດ້ນິລະມິດສ້າງ ແລະ
ເຮັດຂຶ້ນມາ.
4 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າ
ວ່າ ສິ່ງເຫລົ່ານີ້ເປັນລຳດັບການສ້າງຟ້າ
ສະຫວັນ ແລະ ແຜ່ນດິນໂລກ, ເມື່ອມັນຖືກ
ນິລະມິດສ້າງ, ໃນມື້ທີ່ເຮົາ, ອົງພຣະຜູ້ເປັນ
ເຈົ້າ, ໄດ້ເຮັດຟ້າສະຫວັນ ແລະ ແຜ່ນດິນ
ໂລກ,
5 ແລະ ຕົ້ນໄມ້ທຸກຊະນິດຢູ່ໃນທົ່ງ [ກ]ກ່ອນ
ມັນຢູ່ໃນພື້ນດິນ, ແລະ ພືດພັນທຸກຊະນິດ
ຢູ່ໃນທົ່ງກ່ອນມັນຈະເຕີບໂຕຂຶ້ນ. ເພາະວ່າ
ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ [ຂ]ສ້າງທຸກສິ່ງ
ທັງປວງ, ຊຶ່ງເຮົາໄດ້ກ່າວມານັ້ນ, [ຄ]ທາງວິນ
ຍານກ່ອນມັນຈະເປັນຢູ່ທາງທຳມະຊາດຢູ່
ເທິງພື້ນແຜ່ນດິນໂລກ. ເພາະວ່າເຮົາ, ອົງ
ພຣະຜູ້ເປັນເຈົ້າ, ບໍ່ໄດ້ໃຫ້ຝົນຕົກລົງມາ
ເທິງພື້ນແຜ່ນດິນໂລກ. ແລະ ເຮົາ, ອົງພຣະ
ຜູ້ເປັນເຈົ້າ, ໄດ້ [ງ]ສ້າງລູກຫລານມະນຸດທັງ
ປວງໄວ້; ແລະ ຍັງບໍ່ມີມະນຸດຈັກຄົນທຳມາ
ຫາກິນຢູ່ເທິງ [ຈ]ແຜ່ນດິນໂລກເທື່ອ; ເພາະ
ວ່າເຮົາໄດ້ [ສ]ສ້າງພວກເຂົາຢູ່ໃນ [ຊ]ສະຫວັນ;
ແລະ ຍັງບໍ່ມີເນື້ອໜັງຢູ່ເທິງແຜ່ນດິນໂລກ,
ທັງໃນນ້ຳ, ແລະ ທັງໃນອາກາດກໍບໍ່ມີ;
6 ແຕ່ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ກ່າວ,
ແລະ ມີ [ກ]ໝອກລອຍຂຶ້ນມາຈາກແຜ່ນດິນ,
ແລະ ເຮັດໃຫ້ພື້ນດິນຊຸ່ມຊື່ນທົ່ວໄປ.
7 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ກໍເອົາ
[ກ]ຂີ້ດິນແຕ່ພື້ນດິນມາປັ້ນເປັນຜູ້ຊາຍ, ແລະ
ໄດ້ເປົ່າລົມຫາຍໃຈໃສ່ຮູດັງຂອງລາວໃຫ້
ມີຊີວິດ; ແລະ [ຂ]ຮູບປັ້ນນັ້ນໄດ້ກາຍເປັນ
[ຄ]ຈິດວິນຍານທີ່ມີຊີວິດ, ເປັນເນື້ອໜັງຄົນ
[ງ]ທຳອິດຢູ່ເທິງແຜ່ນດິນໂລກ, ເປັນຜູ້ຊາຍ
ຄົນທຳອິດນຳອີກ; ເຖິງຢ່າງໃດກໍຕາມ, ທຸກ
ສິ່ງທັງປວງເປັນຢູ່ແລ້ວກ່ອນຖືກນິລະມິດ

---

**3** 1 *ກ* ຄມພ ສ້າງ, ການສ້າງ.
*ຂ* ປຖກ 2:1;
ອຣຣ 5:1.
2 *ກ* ປຖກ 2:2–3;
ອຣຣ 5:2–3.
ຄມພ ພັກຜ່ອນ.
*ຂ* ຄມພ ວັນຊະບາໂຕ.
3 *ກ* ມຊຍ 13:19.
*ຂ* ອພຍ 31:14–15.
5 *ກ* ປຖກ 2:4–5;
ອຣຣ 5:4–5.
*ຂ* ມຊ 6:51.
*ຄ* ຄພ 29:31–34;
ອຣຣ 3:23.
ຄມພ ການສ້າງວິນຍານ.
*ງ* ຄມພ ວິນຍານ.
*ຈ* ປຖກ 2:5.
*ສ* ຄມພ ມະນຸດ—ມະນຸດ, ລູກທາງວິນຍານຂອງພຣະບິດາເທິງສະຫວັນ.
*ຊ* ຄມພ ສະຫວັນ.
6 *ກ* ປຖກ 2:6.
7 *ກ* ປຖກ 2:7;
ມຊ 4:25; 6:59;
ອຣຣ 5:7.
*ຂ* ຄມພ ອາດາມ.
*ຄ* ຄມພ ຈິດວິນຍານ.
*ງ* ມຊ 1:34.

ສ້າງຂຶ້ນມາ; ແຕ່ມັນໄດ້ຖືກສ້າງຂຶ້ນທາງວິນ
ຍານ ແລະ ຖືກປະດິດຕາມຄຳຂອງເຮົາ.

8 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ສ້າງສວນແຫ່ງໜຶ່ງໃນ [ກ]ເອເດນຢູ່ທາງທິດ
ຕາເວັນອອກ, ແລະ ໄດ້ເອົາຊາຍຜູ້ທີ່ເຮົາ
ປັ້ນຂຶ້ນນັ້ນມາຢູ່.

9 ແລະ ຈາກພື້ນດິນ ເຮົາ, ອົງພຣະຜູ້
ເປັນເຈົ້າ, ໄດ້ບັນດານໃຫ້ມີຕົ້ນໄມ້ທຸກຊະ
ນິດ, ໃນທຳມະຊາດ, ຊຶ່ງເປັນທີ່ເພິ່ງພໍໃຈ
ໃນສາຍຕາຂອງມະນຸດ; ແລະ ມະນຸດສາ
ມາດຫລຽວເຫັນມັນໄດ້. ແລະ ມັນກາຍ
ເປັນຈິດວິນຍານທີ່ມີຊີວິດຄືກັນ. ເພາະວ່າ
ມັນເປັນທາງວິນຍານໃນວັນເວລາທີ່ເຮົາ
ໄດ້ສ້າງມັນ; ເພາະວ່າມັນຍັງໃນຢູ່ຂົງເຂດ
ຊຶ່ງໃນນັ້ນເຮົາ, ພຣະເຈົ້າ, ໄດ້ສ້າງມັນ, ແທ້
ຈິງແລ້ວ, ແມ່ນແຕ່ທຸກສິ່ງທັງປວງທີ່ເຮົາໄດ້
ຕຽມໄວ້ເພື່ອໃຫ້ມະນຸດໃຊ້; ແລະ ມະນຸດ
ໄດ້ເຫັນວ່າມັນດີສຳລັບເປັນອາຫານ. ແລະ
ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ປູກ [ກ]ຕົ້ນໄມ້
ແຫ່ງຊີວິດນຳອີກໄວ້ໃນກາງສວນ, ແລະ
[ຂ]ຕົ້ນໄມ້ແຫ່ງຄວາມຮູ້ດີ ແລະ ຮູ້ຊົ່ວນຳອີກ.

10 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ເຮັດໃຫ້ມີແມ່ນ້ຳສາຍໜຶ່ງໄຫລອອກມາ
ຈາກເອເດນເພື່ອຫົດນ້ຳສວນ; ແລະ ຈາກ
ບ່ອນນັ້ນມັນໄດ້ແບ່ງອອກເປັນສີ່ [ກ]ສາຍ.

11 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ເອີ້ນສາຍທີໜຶ່ງວ່າ ປີໂຊນ, ແລະ ມັນໄຫລ
ອ້ອມດິນແດນຮາວິລາ, ບ່ອນທີ່ເຮົາ, ອົງ
ພຣະຜູ້ເປັນເຈົ້າ, ໄດ້ສ້າງບໍ່ຄຳໄວ້ຢ່າງ
ຫລວງຫລາຍ;

12 ແລະ ບໍ່ຄຳຂອງດິນແດນນັ້ນເປັນບໍ່
ຄຳຊັ້ນດີ, ແລະ ຕົ້ນຢາງຫອມທີ່ມີຄ່າສູງ
ແລະ ແກ້ວປະເສີດໂກລາ.

13 ແລະ ແມ່ນ້ຳສາຍທີສອງຊື່ວ່າ ກີໂຮນ;
ຊຶ່ງສາຍດັ່ງກ່າວໄຫລອ້ອມດິນແດນກູເຊ
(ອີທີໂອເປຍ).

14 ແລະ ແມ່ນ້ຳສາຍທີສາມຊື່ວ່າ ຕີກ
ລິດ; ຊຶ່ງໄຫລຜ່ານດິນແດນອັດຊີເຣຍທາງ
ຕາເວັນອອກ. ແລະ ແມ່ນ້ຳສາຍທີສີ່ຊື່ວ່າ
ເອີຟຣັດ.

15 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ເອົາຊາຍ, ແລະ ວາງລາວໄວ້ໃນສວນ
ເອເດນ, ເພື່ອເຝົ້າຮັກສາ ແລະ ເບິ່ງແຍງ
ມັນ.

16 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ສັ່ງລາວວ່າ: ເຈົ້າສາມາດກິນໝາກໄມ້ຈາກ
ຕົ້ນໄມ້ທຸກຕົ້ນໃນສວນຕາມໃຈຊອບ,

17 ແຕ່ເຈົ້າຈົ່ງຢ່າກິນໝາກໄມ້ຈາກຕົ້ນ
ໄມ້ແຫ່ງຄວາມຮູ້ດີ ແລະ ຮູ້ຊົ່ວ, ເຖິງຢ່າງໃດ
ກໍຕາມ, ເຈົ້າສາມາດ [ກ]ເລືອກເພື່ອຕົວເອງ,
ເພາະໄດ້ມອບໃຫ້ແກ່ເຈົ້າແລ້ວ; ແຕ່ຈຳໄວ້
ວ່າ ເຮົາຫ້າມເຈົ້າ, ເພາະໃນ [ຂ]ມື້ທີ່ເຈົ້າກິນ
ໝາກໄມ້ຈາກຕົ້ນນັ້ນ ເຈົ້າຈະ [ຄ]ຕາຍຢ່າງ
ແນ່ນອນ.

18 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ກ່າວກັບ [ກ]ພຣະອົງດຽວທີ່ຖືກຳເນີດຂອງ
ເຮົາວ່າ ບໍ່ເປັນການສົມຄວນທີ່ຜູ້ຊາຍຕ້ອງ
ຢູ່ໂດດດ່ຽວຢ່າງນີ້; ດັ່ງນັ້ນ, ເຮົາຈະສ້າງຜູ້
[ຂ]ຊ່ວຍຊູທີ່ເໝາະສົມໃຫ້ລາວ.

19 ແລະ ຈາກພື້ນດິນ ເຮົາ, ອົງພຣະຜູ້
ເປັນເຈົ້າ, ໄດ້ປັ້ນສັດທຸກຕົວໃນທົ່ງ, ແລະ
ນົກທຸກຕົວໃນອາກາດ; ແລະ ໄດ້ບັນຊາ

8 ກ ຄມພ ເອເດນ.
9 ກ ຄມພ ຕົ້ນໄມ້ແຫ່ງຊີວິດ.
ຂ ປຖກ 2:9.
10 ກ ປຖກ 2:10.
17 ກ ມຊ 7:32.
ຄມພ ອຳເພີໃຈ.
ຂ ອຣຣ 5:13.
ຄ ປຖກ 2:17.
ຄມພ ຄວາມຕາຍທາງ
ຮ່າງກາຍ; ມະຕະ,
ຄວາມເປັນມະຕະ.
18 ກ ຄມພ ອົງດຽວທີ່ຖືກຳເນີດ.
ຂ ປຖກ 2:18;
ອຣຣ 5:14.

ມັນໃຫ້ມາຫາອາດາມ, ເພື່ອເບິ່ງວ່າລາວ
ຈະເອີ້ນມັນຢ່າງໃດ; ແລະ ມັນເປັນຈິດວິນ
ຍານທີ່ມີຊີວິດຢູ່ຄືກັນ; ເພາະວ່າເຮົາ, ພຣະ
ເຈົ້າ, ໄດ້ເປົ່າລົມຫາຍໃຈໃສ່ມັນໃຫ້ມີຊີວິດ,
ແລະ ໄດ້ບັນຊາວ່າອັນໃດກໍຕາມທີ່ອາດາມ
ເອີ້ນສັດທຸກຊະນິດທີ່ມີຊີວິດເຫລົ່ານັ້ນ, ນັ້ນ
ຈະເປັນຊື່ຂອງມັນ.

20 ແລະ ອາດາມໄດ້ຕັ້ງຊື່ໃຫ້ສັດລ້ຽງ,
ແລະ ນົກໃນອາກາດ, ແລະ ໃຫ້ສັດປ່າທັງ
ໝົດຢູ່ໃນທົ່ງ; ແຕ່ສຳລັບອາດາມ, ບໍ່ມີສັດ
ໂຕໃດເລີຍເປັນຜູ້ຊ່ວຍຊູທີ່ເໝາະສົມແກ່
ລາວ.

21 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ເຮັດໃຫ້ອາດາມນອນຫລັບ; ແລະ ລາວໄດ້
ນອນຫລັບສະໜິດ, ແລະ ເຮົາໄດ້ເອົາກະ
ດູກຂ້າງຊີກໜຶ່ງຂອງລາວອອກມາ ແລະ
ໄດ້ເຮັດໃຫ້ເນື້ອໜັງຈອດຕິດກັນດັ່ງເດີມ;

22 ແລະ ກະດູກຂ້າງຊຶ່ງເຮົາ, ອົງພຣະຜູ້
ເປັນເຈົ້າ, ໄດ້ເອົາມາຈາກຜູ້ຊາຍ, ມາສ້າງ
ເປັນ [ກ]ຜູ້ຍິງ, ແລະ ນຳນາງມາມອບໃຫ້
ລາວ.

23 ແລະ ອາດາມ ໄດ້ກ່າວ ວ່າ: ຕອນ ນີ້
ເຮົາຮູ້ແລ້ວວ່າ ກະດູກຂອງນາງມາຈາກກະ
ດູກຂອງເຮົາ, ແລະ [ກ]ເນື້ອໜັງຂອງນາງມາ
ຈາກເນື້ອໜັງຂອງເຮົາ; ນາງຈະຖືກເອີ້ນວ່າ
ຜູ້ຍິງ, ເພາະວ່ານາງມາຈາກຜູ້ຊາຍ.

24 ສະນັ້ນ ຜູ້ຊາຍຈຶ່ງຈາກພໍ່ແມ່ ແລະ ໄປ
[ກ]ຕິດພັນຢູ່ກັບເມຍຂອງຕົນ; ແລະ ພວກ
ເຂົາທັງສອງກໍກາຍ [ຂ]ເປັນໜຶ່ງ.

25 ແລະ ພວກເຂົາທັງສອງໄດ້ເປືອຍ
ກາຍຢູ່, ຜູ້ຊາຍ ແລະ ເມຍຂອງລາວ, ແຕ່
ພວກເຂົາບໍ່ຮູ້ສຶກລະອາຍກັນເລີຍ.

## ບົດທີ 4
(ເດືອນມິຖຸນາ–ເດືອນຕຸລາ 1830)

*ວິທີທີ່ຊາຕານໄດ້ກາຍເປັນມານ—ມັນລໍ້ລວງເອວາ—ອາດາມ ແລະ ເອວາຕົກ, ແລະ ຄວາມຕາຍເຂົ້າມາສູ່ໂລກ.*

1 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ກ່າວກັບ ໂມເຊວ່າ: [ກ]ຊາຕານຜູ້ນັ້ນ, ຜູ້ທີ່
ເຈົ້າໄດ້ສັ່ງໃນນາມຂອງພຣະອົງດຽວທີ່ຖື
ກຳເນີດຂອງເຮົາ, ຄືຄົນດຽວກັນນັ້ນຊຶ່ງດຳ
ລົງຢູ່ [ຂ]ຕັ້ງແຕ່ຕົ້ນ, ແລະ ມັນໄດ້ມາຢູ່ຕໍ່ໜ້າ
ເຮົາ, ໂດຍກ່າວວ່າ—ຈົ່ງເບິ່ງ, ຂ້າພຣະອົງ
ຢູ່ນີ້ເດ, ຂໍຈົ່ງສົ່ງຂ້າພຣະອົງໄປເຖີດ, ຂ້າ
ພຣະອົງຈະເປັນບຸດຂອງພຣະອົງ, ແລະ
ຂ້າພຣະອົງຈະໄຖ່ມະນຸດຊາດທຸກຄົນ, ຈົນ
ວ່າຈິດວິນຍານໜຶ່ງກໍຈະບໍ່ເສຍໄປ, ແລະ
[ຄ]ຂ້າພຣະອົງຈະເຮັດແນວນັ້ນແທ້ໆ; ດັ່ງ
ນັ້ນຈົ່ງມອບກຽດຕິຍົດຂອງພຣະອົງໃຫ້ຂ້າ
ພຣະອົງເຖີດ.

2 ແຕ່, ຈົ່ງເບິ່ງ, [ກ]ບຸດທີ່ຮັກຂອງເຮົາ, ຊຶ່ງ
ເປັນທີ່ຮັກ ແລະ ທີ່ [ຂ]ເລືອກໄວ້ແລ້ວຂອງເຮົາ
ຕັ້ງແຕ່ຕົ້ນ, ໄດ້ກ່າວກັບເຮົາວ່າ—[ຄ]ພຣະ
ບິດາເອີຍ, ຂໍໃຫ້ [ງ]ເປັນໄປຕາມພຣະປະສົງ
ຂອງພຣະອົງເທີ້ນ, ແລະ ຂໍໃຫ້ [ຈ]ລັດສະໝີ
ພາບເປັນຂອງພຣະອົງຕະຫລອດການ.

---

22 *ກ* ຄມພ ຜູ້ຍິງ, ກຸ່ມຜູ້ຍິງ; ເອວາ.
23 *ກ* ປຖກ 2:23; ອຣຣ 5:17.
24 *ກ* ປຖກ 2:24; ຄພ 42:22; 49:15–16; ອຣຣ 5:17–18.
*ຂ* ຄມພ ແຕ່ງງານ, ການແຕ່ງງານ.
**4** 1 *ກ* ຄມພ ມານ.
*ຂ* ຄພ 29:36–37.
*ຄ* ອຊຢ 14:12–15.
2 *ກ* ຄມພ ພຣະເຢຊູຄຣິດ.
*ຂ* ມຊ 7:39; ອຣຣ 3:27. ຄມພ ແຕ່ງຕັ້ງລ່ວງໜ້າ, ການແຕ່ງຕັ້ງລ່ວງໜ້າ.
*ຄ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ງ* ລກ 22:42.
*ຈ* ຄມພ ລັດສະໝີພາບ.

3 ດັ່ງນັ້ນ, ເພາະວ່າຊາຕານໄດ້ [ກ]ກະບົດ
ຕໍ່ເຮົາ, ແລະ ໄດ້ສະແຫວງຫາທີ່ຈະທຳລາຍ
[ຂ]ອຳເພີໃຈຂອງມະນຸດ, ຊຶ່ງ ເຮົາ, ອົງພຣະ
ຜູ້ເປັນເຈົ້າ, ໄດ້ມອບໃຫ້ມັນ, ແລະ ວ່າຈະ
ໃຫ້ເຮົາມອບອຳນາດຂອງເຮົາເອງໃຫ້ມັນ
ນຳອີກ; ໂດຍອຳນາດຂອງພຣະອົງດຽວທີ່
ຖືກຳເນີດຂອງເຮົາ, ເຮົາຈຶ່ງໄດ້ເຮັດໃຫ້ມັນ
ຖືກ [ຄ]ໂຍນລົງໄປ;

4 ແລະ ມັນໄດ້ກາຍເປັນຊາຕານ, ແທ້
ຈິງແລ້ວ, ແມ່ນແຕ່ເປັນມານ, ບິດາຂອງ
[ກ]ຄວາມຕົວະທັງປວງ, ທີ່ຈະຫລອກລວງ
ແລະ ເຮັດໃຫ້ມະນຸດຕາບອດ, ແລະ ທີ່ຈະ
ນຳພາພວກເຂົາໄປເປັນທາດຕາມຄວາມ
ປະສົງຂອງມັນ, ແມ່ນແຕ່ຫລາຍຕໍ່ຫລາຍ
ຄົນທີ່ບໍ່ເຊື່ອຟັງສຽງຂອງເຮົາ.

5 ແລະ ບັດນີ້ງູເປັນສັດທີ່ມີ [ກ]ເລ່ຫລ່ຽມ
ຫລາຍກວ່າສັດອື່ນໃດໃນທົ່ງ ຊຶ່ງເຮົາ, ອົງ
ພຣະຜູ້ເປັນເຈົ້າ, ໄດ້ສ້າງຂຶ້ນມາ.

6 ແລະ ຊາຕານໄດ້ເອົາມັນໃສ່ໄວ້ໃນຫົວ
ໃຈຂອງງູ, (ເພາະມັນໄດ້ດຶງຫລາຍຄົນໃຫ້
ຕິດຕາມມັນໄປ,) ແລະ ມັນໄດ້ພະຍາຍາມ
ລໍ້ລວງ [ກ]ເອວານຳອີກ, ເພາະວ່າມັນບໍ່ຮູ້ຈັກ
ພຣະປະສົງຂອງພຣະເຈົ້າ, ດັ່ງນັ້ນ ມັນຈຶ່ງ
ສະແຫວງຫາທີ່ຈະທຳລາຍໂລກ.

7 ແລະ ມັນໄດ້ກ່າວກັບຜູ້ຍິງວ່າ: ແທ້ຈິງ
ແລ້ວ, ພຣະເຈົ້າໄດ້ກ່າວບໍວ່າ—ບໍ່ໃຫ້ເຈົ້າ
ກິນໝາກໄມ້ໃດໆຢູ່ໃນ [ກ]ສວນນີ້? (ແລະ
ມັນໄດ້ກ່າວດ້ວຍປາກຂອງງູ.)

8 ແລະ ຜູ້ຍິງໄດ້ກ່າວກັບງູວ່າ: ໝາກໄມ້
ທຸກກົກຢູ່ໃນສວນນີ້ ພວກເຮົາກິນໄດ້ໝົດ;

9 ເວັ້ນໄວ້ແຕ່ໝາກໄມ້ໃນຕົ້ນທີ່ຢູ່ກາງ
ສວນ, ພຣະເຈົ້າໄດ້ກ່າວວ່າ—ບໍ່ໃຫ້ກິນ
ມັນ, ແມ່ນແຕ່ແຕະຕ້ອງມັນເປັນເດັດຂາດ,
ຖ້າບໍ່ດັ່ງນັ້ນພວກເຈົ້າຈະຕາຍ.

10 ແລະ ງູໄດ້ກ່າວກັບຜູ້ຍິງວ່າ: ເຈົ້າຈະບໍ່
ຕາຍດອກ;

11 ເພາະວ່າພຣະເຈົ້າຮູ້ວ່າພວກເຈົ້າກິນ
ໝາກໄມ້ນັ້ນເມື່ອໃດ, [ກ]ຕາຂອງພວກເຈົ້າ
ກໍຈະຖືກເປີດເມື່ອນັ້ນ, ແລະ ພວກເຈົ້າຈະ
ກາຍເປັນເໝືອນດັ່ງພຣະເຈົ້າ, [ຂ]ຮູ້ຈັກດີ
ແລະ ຮູ້ຈັກຊົ່ວ.

12 ແລະ ເມື່ອຜູ້ຍິງເຫັນວ່າຕົ້ນໄມ້ນັ້ນ
ງາມແທ້ໆ ແລະ ໝາກໄມ້ກໍເປັນຕາຢາກ
ກິນອີ່ຫລີ, ທັງຄິດວ່າ ຖ້າຕົນສະຫລາດຂຶ້ນ
ອີກກໍ [ກ]ຄົງດີຍິ່ງ, ນາງຈຶ່ງປິດເອົາໝາກໄມ້,
ແລະ ໄດ້ [ຂ]ກິນມັນ, ແລະ ໄດ້ເອົາໄປໃຫ້ຜົວ
ຂອງຕົນຄືກັນ, ແລະ ລາວກໍໄດ້ກິນ.

13 ແລະ ຕາຂອງພວກເຂົາທັງສອງໄດ້
ຖືກເປີດ, ແລະ ພວກເຂົາຮູ້ວ່າພວກຕົນ
[ກ]ເປືອຍກາຍ. ແລະ ພວກເຂົາໄດ້ເອົາໃບ
ໄມ້ມາຫຍິບເຂົ້າກັນ ເພື່ອປົກປິດຮ່າງກາຍ
ຂອງຕົນເອງໄວ້.

14 ແລະ ພວກເຂົາໄດ້ຍິນສຸລະສຽງ
ຂອງອົງພຣະຜູ້ເປັນເຈົ້າ, ໃນຂະນະທີ່
ພວກເຂົາ [ກ]ຍ່າງຢູ່ໃນສວນ, ໃນມື້ທີ່ເຢັນ;
ແລະ ອາດາມກັບເມຍຂອງລາວຈຶ່ງໄດ້
ຫລົບລີ້ຊ່ອນຕົວເອງຈາກທີ່ປະທັບຂອງອົງ
ພຣະຜູ້ເປັນເຈົ້າຢູ່ໃນທ່າມກາງຕົ້ນໄມ້ທັງ
ຫລາຍ.

15 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້

3 ກ ຄມພ ກອງປະຊຸມ ໃນສະຫວັນ.
ຂ ຄມພ ອຳເພີໃຈ.
ຄ ຄພ 76:25–27.
4 ກ 2 ນຟ 2:18; ຄພ 10:25. ຄມພ ຕົວະ; ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.
5 ກ ປຖກ 3:1; ມຊຢ 16:3; ແອວ 12:4.
6 ກ ຄມພ ເອວາ.
7 ກ ຄມພ ເອເດນ.
11 ກ ປຖກ 3:3–6; ມຊ 5:10.
ຂ ແອວ 12:31.
12 ກ ປຖກ 3:6.
ຂ ຄມພ ການຕົກຂອງ ອາດາມ ແລະ ເອວາ.
13 ກ ປຖກ 2:25.
14 ກ ປຖກ 3:8.

ເອີ້ນຫາ ອາດາມ, ແລະ ໄດ້ກ່າວກັບ ລາວ
ວ່າ: ເຈົ້າ [ກ]ໄປໃສ?
16 ແລະ ລາວ ໄດ້ກ່າວວ່າ: ຂ້ານ້ອຍໄດ້
ຍິນສຸລະສຽງຂອງພຣະອົງຢູ່ໃນສວນ, ແລະ
ຂ້ານ້ອຍຢ້ານກົວ, ເພາະຂ້ານ້ອຍເຫັນວ່າ
ຂ້ານ້ອຍເປືອຍກາຍ, ແລະ ຂ້ານ້ອຍຈຶ່ງໄດ້
ຫລົບລີ້ຊ່ອນຕົວຢູ່.
17 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ກ່າວ ກັບ ອາດາມ ວ່າ: ໃຜບອກວ່າເຈົ້າ
ເປືອຍກາຍ? ບໍ່ແມ່ນເຈົ້າໄດ້ກິນໝາກໄມ້ທີ່
ເຮົາໄດ້ຫ້າມເຈົ້າບໍ່ໃຫ້ກິນນັ້ນບໍ? ຖ້າເປັນ
ດັ່ງນັ້ນ ເຈົ້າຈະ [ກ]ຕາຍຢ່າງແນ່ນອນ.
18 ແລະ ຜູ້ຊາຍໄດ້ກ່າວວ່າ: ຜູ້ຍິງທີ່ພຣະ
ອົງໄດ້ປະທານໃຫ້ຂ້ານ້ອຍ, ແລະ ຊົງບັນ
ຊາໃຫ້ນາງຢູ່ກັບຂ້ານ້ອຍ, ໄດ້ໃຫ້ໝາກໄມ້
ຂອງຕົ້ນນັ້ນແກ່ຂ້ານ້ອຍ ແລະ ຂ້ານ້ອຍໄດ້
ກິນ.
19 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ກ່າວກັບຜູ້ຍິງວ່າ: ເປັນຫຍັງເຈົ້າຈຶ່ງໄດ້ເຮັດ
ແນວນັ້ນ? ແລະ ຜູ້ຍິງໄດ້ກ່າວວ່າ: ງູໄດ້ [ກ]ລໍ້
ລວງຂ້ານ້ອຍ, ແລະ ຂ້ານ້ອຍໄດ້ກິນ.
20 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ກ່າວກັບງູວ່າ: ດ້ວຍວ່າເຈົ້າໄດ້ເຮັດສິ່ງນີ້
ເຈົ້າເທົ່ານັ້ນຈະຖືກ [ກ]ສາບແຊ່ງຫລາຍກວ່າ
ໃນຈຳພວກສັດສາວາສິ່ງທັງປວງ, ແລະ
ຫລາຍກວ່າສັດທັງຫລາຍຢູ່ໃນທົ່ງ; ເຈົ້າຈະ
ເລືອຄານໄປດ້ວຍທ້ອງ, ແລະ ຈະເອົາຂີ້
ດິນເປັນອາຫານຕະຫລອດວັນເວລາຂອງ
ຊີວິດເຈົ້າ;
21 ແລະ ເຮົາຈະເຮັດໃຫ້ເຈົ້າກັບຜູ້ຍິງ
ກຽດຊັງກັນ, ພົງພັນຂອງເຈົ້າ ແລະ ຂອງ
ນາງຈະເປັນສັດຕູຄູ່ອາຄາດກັນ; ແລະ
ເຂົາຈະເຮັດໃຫ້ຫົວຂອງເຈົ້າຟົກຊໍ້າ,
ແລະ ເຈົ້າຈະເຮັດໃຫ້ສົ້ນໜ່ອງຂອງເຂົາ
ຟົກຊໍ້າ.
22 ກັບຜູ້ຍິງ, ເຮົາ, ອົງພຣະຜູ້ເປັນເຈົ້າ,
ໄດ້ກ່າວວ່າ: ເຮົາຈະເພີ່ມຄວາມລຳບາກ
ເມື່ອເຈົ້າຫາກຖືພາ. ເຈົ້າຈະເບິ່ງລູກອອກ
ມາ [ກ]ຢ່າງເຈັບປວດເຫລືອລົ້ນ, ແລະ ເຖິງ
ປານນັ້ນເຈົ້າກໍບໍ່ພົ້ນທີ່ຢາກໄດ້ຜົວມາຄອງ,
ແລະ ລາວຈະປົກຄອງເໜືອເຈົ້າ.
23 ແລະ ກັບອາດາມ, ເຮົາ, ອົງພຣະຜູ້
ເປັນເຈົ້າ, ໄດ້ກ່າວວ່າ: ເພາະເຈົ້າໄດ້ຍິນ
ຍອມຟັງຄວາມເມຍ; ເຈົ້າຈຶ່ງກິນໝາກໄມ້
ທີ່ເຮົາໄດ້ສັ່ງຫ້າມ, ໂດຍກ່າວວ່າ—ຫ້າມບໍ່
ໃຫ້ເຈົ້າກິນ, ພື້ນດິນຈະຖືກສາບແຊ່ງເພາະ
ສິ່ງທີ່ເຈົ້າໄດ້ເຮັດມາ; ໃນຄວາມໂສກເສົ້າ
ເຈົ້າຈະເຮັດວຽກໜັກເພື່ອຫາລ້ຽງທ້ອງ
ຕະຫລອດວັນເວລາຂອງຊີວິດເຈົ້າ.
24 ທີ່ດິນຈະເກີດຫຍ້າ ແລະ ມີໜາມເຕັມ
ໄປທົ່ວ, ແລະ ຕົວເຈົ້າຈະໄດ້ກິນພືດໃນທົ່ງ
ເປັນອາຫານ.
25 ເຈົ້າຈະເຮັດວຽກຍາກ ຈົນ [ກ]ເຫື່ອໄຫລ
ຍ້ອຍອອກມາເພື່ອຈະເຮັດໃຫ້ດິນເກີດຜົນ
ພຽງພໍລ້ຽງຊີວິດເຈົ້າ, ຈົນກວ່າເຈົ້າຈະຄືນ
ໄປສູ່ບ່ອນທີ່ເຈົ້າຖືກສ້າງຂຶ້ນມາ—ເພາະ
ເຈົ້າຈະຕາຍຢ່າງແນ່ນອນ—ເພາະວ່າຈາກ
ດິນເຮົາໄດ້ນຳເຈົ້າອອກມາ: ເພາະວ່າເຈົ້າ
ຖືກສ້າງມາແຕ່ [ຂ]ດິນ, ແລະ ເຈົ້າຈະຄືນໄປ
ເປັນດິນອີກ.
26 ແລະ ອາດາມໄດ້ເອີ້ນເມຍຂອງລາວ
ວ່າ ເອວາ, ເພາະວ່ານາງເປັນມານດາ
ຂອງສິ່ງທີ່ມີຊີວິດທັງໝົດ; ເພາະວ່າເຮົາ,
ອົງພຣະຜູ້ເປັນເຈົ້າ, ໄດ້ເອີ້ນຜູ້ຍິງຄົນທຳ

15 *ກ* ປຖກ 3:9.
17 *ກ* ມຊ 3:17.
19 *ກ* ປຖກ 3:13; ມຊຢ 16:3.
20 *ກ* ປຖກ 3:13–15.
22 *ກ* ປຖກ 3:16.
25 *ກ* ປຖກ 3:17–19. ຄມພ ການຕົກຂອງອາດາມ ແລະ ເອວາ.
*ຂ* ປຖກ 2:7; ມຊ 6:59; ອຣຣ 5:7.

ອິດຂອງຜູ້ຍິງທັງປວງ, ຊຶ່ງມີ [ກ]ຢ່າງຫລວງ
ຫລາຍ.
27 ກັບ ອາດາມ, ແລະ ກັບ ເມຍ ຂອງ
ລາວ, ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ ເຮັດ
ເສື້ອໜັງສັດໃຫ້ພວກເຂົາ [ກ]ນຸ່ງ.
28 ແລະ ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້
ກ່າວກັບພຣະອົງດຽວທີ່ຖືກຳເນີດຂອງເຮົາ
ວ່າ: ຈົ່ງເບິ່ງ, [ກ]ມະນຸດໄດ້ກາຍເປັນເໝືອນ
ດັ່ງຄົນໃນພວກເຮົາ ແລະ ທັງ [ຂ]ຮູ້ຈັກຄວາມ
ດີ ແລະ ຮູ້ຈັກຄວາມຊົ່ວ; ແລະ ບັດນີ້ ຢ້ານ
ວ່າລາວຈະຍື່ນມືຂອງລາວອອກໄປ [ຄ]ຮັບ
ສ່ວນຈາກ [ງ]ຕົ້ນໄມ້ແຫ່ງຊີວິດນຳອີກ, ແລະ
ກິນ ແລະ ມີຊີວິດຢູ່ຕະຫລອດການ,
29 ສະນັ້ນ ເຮົາ, ອົງພຣະຜູ້ເປັນເຈົ້າ, ຈະ
ສົ່ງລາວອອກໄປຈາກສວນ [ກ]ເອເດນ, ເພື່ອ
ໃຫ້ທຳມາຫາກິນຢູ່ໃນບ່ອນທີ່ລາວຖືກສ້າງ
ຂຶ້ນມາ;
30 ເພາະດັ່ງທີ່ເຮົາ, ອົງພຣະຜູ້ເປັນເຈົ້າ,
ມີຊີວິດຢູ່ສັນໃດ, ແມ່ນແຕ່ [ກ]ຖ້ອຍຄຳຂອງ
ເຮົາຈະກັບຄືນມາແບບໄຮ້ຜົນບໍ່ໄດ້ສັນນັ້ນ
ເພາະດັ່ງທີ່ມັນອອກໄປຈາກປາກຂອງເຮົາ
ມັນຈະສຳເລັດຜົນດັ່ງນັ້ນ.
31 ສະນັ້ນເຮົາຈຶ່ງໄດ້ຂັບໄລ່ຊາຍຜູ້ນັ້ນ
ອອກໄປ, ແລະ ເຮົາໄດ້ເອົາ [ກ]ທູດມາເຝົ້າ
ສວນເອເດນຢູ່ທາງທິດຕາເວັນອອກ, ແລະ
ມີດາບທີ່ມີແປວໄຟແກວ່ງໄປມາທົ່ວທຸກທິດ
ເພື່ອຮັກສາເສັ້ນທາງຂອງຕົ້ນໄມ້ແຫ່ງຊີ
ວິດ.
32 (ແລະ ນີ້ເປັນຖ້ອຍຄຳທີ່ເຮົາໄດ້ກ່າວ
ກັບຜູ້ຮັບໃຊ້ຂອງເຮົາ ໂມເຊ, ແລະ ມັນເປັນ
ຄວາມຈິງແມ່ນແຕ່ດັ່ງທີ່ເຮົາປະສົງ; ແລະ
ເຮົາໄດ້ກ່າວມັນກັບເຈົ້າ. ຈົ່ງເບິ່ງວ່າເຈົ້າຈະ
ບໍ່ໃຫ້ມະນຸດຄົນໃດເຫັນ, ຈົນກວ່າເຮົາບັນ
ຊາເຈົ້າ, ຍົກເວັ້ນແຕ່ຄົນທີ່ເຊື່ອ. ອາແມນ.)

## ບົດທີ 5

(ເດືອນມິຖຸນາ–ເດືອນຕຸລາ 1830)

*ອາດາມ ແລະ ເອວາ ເກີດລູກ—ອາດາມຖວາຍເຄື່ອງບູຊາ ແລະ ຮັບໃຊ້ພຣະເຈົ້າ—ກາອິນ ແລະ ອາເບັນໄດ້ເກີດມາ—ກາອິນກະບົດ, ຮັກຊາຕານຫລາຍກວ່າພຣະເຈົ້າ, ແລະ ກາຍເປັນບຸດແຫ່ງຄວາມຈິບຫາຍ—ການຂ້າຟັນ ແລະ ຄວາມຊົ່ວຮ້າຍແຜ່ຂະຫຍາຍອອກໄປທົ່ວ—ພຣະກິດຕິຄຸນຖືກສັ່ງສອນຕັ້ງແຕ່ຕົ້ນ.*

1 ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງ
ຈາກເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ຂັບໄລ່
ພວກເຂົາອອກໄປແລ້ວ, ອາດາມໄດ້ເລີ່ມ
ເຮັດໄຮ່ໄຖນາ, ແລະ ມີ [ກ]ອຳນາດປົກຄອງ
ເໜືອສັດທັງປວງໃນທົ່ງ, ແລະ ໄດ້ເຮັດ
ວຽກງານຈົນເຫື່ອໄຫລຍ້ອຍອອກມາ, ດັ່ງທີ່
ເຮົາພຣະຜູ້ເປັນເຈົ້າໄດ້ບັນຊາລາວ. ແລະ
ເອວາ, ເມຍຂອງລາວກໍຄືກັນ, ໄດ້ທຳງານ
ກັບລາວ.
2 ແລະ ອາດາມໄດ້ສົມສູ່ຢູ່ກັບເມຍຂອງ
ລາວ, ແລະ ນາງກໍໄດ້ [ກ]ເກີດລູກຊາຍ ແລະ
[ຂ]ລູກສາວ [ຄ]ຫລາຍຄົນ, ແລະ ພວກເຂົາໄດ້

26 *ກ* ມຊ 1:34; 6:9.
27 *ກ* ຄມພ ຮຽບຮ້ອຍ, ຄວາມຮຽບຮ້ອຍ.
28 *ກ* ປຖກ 3:22. ຄມພ ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ.
*ຂ* ຄມພ ຄວາມຮູ້.
*ຄ* ແອວ 42:4–5.
*ງ* ປຖກ 2:9; 1 ນຟ 11:25; ມຊ 3:9. ຄມພ ຕົ້ນໄມ້ແຫ່ງຊີວິດ.
29 *ກ* ຄມພ ເອເດນ.
30 *ກ* 1 ກສ 8:56; ຄພ 1:38.
31 *ກ* ແອວ 42:3. ຄມພ ເຄຣູບິມ.
**5** 1 *ກ* ມຊ 2:26.
2 *ກ* ປຖກ 5:4.
*ຂ* ຄພ 138:39.
*ຄ* ປຖກ 1:28; ມຊ 2:28.

ເລີ່ມຂະຫຍາຍເຜົ່າພັນ ແລະ ເພີ່ມທະວີຈົນ
ເຕັມແຜ່ນດິນໂລກ.
3 ແລະ ນັບ ແຕ່ ເວລາ ນັ້ນ ມາ, ພວກ ລູກ
ຊາຍ ແລະ ພວກ [ກ]ລູກສາວຂອງອາດາມ
ໄດ້ ເລີ່ມ ແຍກ ໄປ ເປັນ ຄູ່ໆ ໃນ ແຜ່ນດິນ,
ແລະ ເຮັດ ໄຮ່ ໄຖນາ, ແລະ ລ້ຽງຝູງສັດ,
ແລະ ພວກເຂົາເລີ່ມມີລູກຊາຍ ແລະ ລູກ
ສາວຫລາຍຄົນນຳອີກ.
4 ແລະ ອາດາມ ແລະ ເອວາ, ເມຍຂອງ
ລາວ, ໄດ້ ເອີ້ນ ຫາ ພຣະ ນາມ ຂອງ ພຣະ ຜູ້
ເປັນເຈົ້າ, ແລະ ພວກເຂົາໄດ້ຍິນສຸລະສຽງ
ຂອງ ພຣະ ຜູ້ ເປັນ ເຈົ້າ ມາ ຈາກ ທາງ ສວນ
[ກ]ເອເດນ, ກ່າວກັບພວກເຂົາ, ແລະ ພວກ
ເຂົາບໍ່ໄດ້ເຫັນພຣະອົງ; ເພາະວ່າພວກເຂົາ
ຖືກກັນໄວ້ຈາກ [ຂ]ທີ່ປະທັບຢູ່ຂອງພຣະອົງ.
5 ແລະ ພຣະ ອົງ ໄດ້ ປະທານ ພຣະ ບັນ
ຍັດໃຫ້ແກ່ພວກເຂົາ, ເພື່ອວ່າພວກເຂົາຈະ
[ກ]ນະມັດສະການພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຂົາ, ແລະ ຄວນຖວາຍ
ລູກສັດ [ຂ]ຫົວປີຈາກຝູງສັດຂອງພວກເຂົາ,
ເພື່ອເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ.
ແລະ ອາດາມໄດ້ [ຄ]ເຊື່ອຟັງພຣະບັນຍັດ
ຂອງພຣະຜູ້ເປັນເຈົ້າ.
6 ແລະ ຫລັງຈາກຫລາຍມື້ຜ່ານໄປ [ກ]ທູດ
ອົງໜຶ່ງຂອງພຣະຜູ້ເປັນເຈົ້າໄດ້ມາປະກົດຕໍ່
ອາດາມ, ໂດຍກ່າວວ່າ: ເປັນຫຍັງເຈົ້າຈຶ່ງ
[ຂ]ຖວາຍ ເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ?
ແລະ ອາດາມໄດ້ຕອບເພິ່ນວ່າ: ຂ້ານ້ອຍບໍ່
ຮູ້, ນອກຈາກແຕ່ພຣະຜູ້ເປັນເຈົ້າໄດ້ບັນຊາ
ຂ້ານ້ອຍ.
7 ແລະ ແລ້ວ ທູດ ໄດ້ ກ່າວ ມີ ຄວາມ ວ່າ:
ສິ່ງນີ້ ເປັນ [ກ]ແບບ ຂອງ [ຂ]ການ ເສຍ ສະລະ
ຂອງ ພຣະ ອົງດຽວທີ່ຖືກຳເນີດ ຈາກພຣະ
ບິດາ, ຊຶ່ງເຕັມໄປດ້ວຍ [ຄ]ພຣະຄຸນ ແລະ
ຄວາມຈິງ.
8 ດັ່ງນັ້ນ, ເຈົ້າ ຈົ່ງ ກະ ທຳ ທັງ ໝົດ ທີ່ ເຈົ້າ
ກະທຳໃນ [ກ]ພຣະນາມຂອງພຣະບຸດ, ແລະ
ເຈົ້າຈົ່ງ [ຂ]ກັບໃຈ ແລະ [ຄ]ຮ້ອງຫາພຣະເຈົ້າ
ໃນພຣະນາມຂອງພຣະບຸດຕະຫລອດໄປ.
9 ແລະ ໃນມື້ນັ້ນ [ກ]ພຣະວິນຍານບໍລິສຸດ
ໄດ້ ສະ ເດັດ ລົງ ມາ ເທິງ ອາດາມ, ຊຶ່ງ ເປັນ
ພະຍານ ເຖິງ ພຣະ ບິດາ ແລະ ພຣະ ບຸດ,
ໂດຍ ກ່າວວ່າ: ເຮົາ ຄື [ຂ]ພຣະອົງດຽວທີ່ຖື
ກຳເນີດຈາກພຣະບິດາຕັ້ງແຕ່ຕົ້ນ, ນັບແຕ່
ນີ້ເປັນຕົ້ນໄປ ແລະ ຕະຫລອດການ, ວ່າດັ່ງ
ທີ່ເຈົ້າໄດ້ [ຄ]ຕົກ ເຈົ້າຈະໄດ້ຖືກ [ງ]ໄຖ່, ແລະ
ມະນຸດຊາດທັງປວງ, ແມ່ນແຕ່ຫລາຍເທົ່າ
ທີ່ຈະປາດຖະໜາ.
10 ແ ລະ ໃນ ມື້ ນັ້ນ ອາດາມ ໄດ້ ຖວາຍ
ພຣະ ພອນ ແດ່ ພຣະ ເຈົ້າ ແລະ ໄດ້ [ກ]ເຕັມ
ປ່ຽມ, ແລະ ໄດ້ເລີ່ມ [ຂ]ທຳນາຍກ່ຽວກັບຄອບ
ຄົວທັງປວງຂອງແຜ່ນດິນໂລກ, ໂດຍກ່າວ

3 ກ ມຊ 5:28.
4 ກ ຄມພ ເອເດນ.
ຂ ແອວ 42:9.
5 ກ ຄມພ ນະມັດສະການ.
ຂ ອພຍ 13:12–13; ຈບຊ 18:17; ມຊຢ 2:3. ຄມພ ລູກກົກ.
ຄ ຄມພ ເຊື່ອຟັງ, ການ ເຊື່ອຟັງ, ຟັງຄວາມ.
6 ກ ຄມພ ທູດ, ເທວະດາ.
ຂ ຄມພ ເສຍສະລະ, ການເສຍສະລະ.
7 ກ ຄມພ ພຣະເຢຊູຄຣິດ— ຮູບແບບ ຫລື ເຄື່ອງ ໝາຍເຖິງພຣະຄຣິດ.
ຂ ແອວ 34:10–15. ຄມພ ເລືອດ, ໂລຫິດ.
ຄ ມຊ 1:6, 32. ຄມພ ພຣະຄຸນ.
8 ກ 2 ນຟ 31:21.
ຂ ມຊ 6:57. ຄມພ ກັບໃຈ, ການກັບໃຈ.
ຄ ຄມພ ອະທິຖານ, ການອະ ທິຖານ, ຄຳອະທິຖານ.
9 ກ ຄມພ ພຣະວິນຍານບໍລິສຸດ.
ຂ ຄມພ ພຣະເຢຊູຄຣິດ; ອົງດຽວທີ່ຖືກຳເນີດ.
ຄ ຄມພ ການຕົກຂອງ ອາດາມ ແລະ ເອວາ; ຄວາມຕາຍທາງວິນຍານ.
ງ ມຊຢ 27:24–26; ຄພ 93:38; ຫຼຊ 1:3. ຄມພ ໄຖ່, ການໄຖ່, ຖືກໄຖ່; ແຜນແຫ່ງການໄຖ່.
10 ກ ຄມພ ເກີດໃໝ່, ເກີດ ຈາກພຣະເຈົ້າ.
ຂ ຄພ 107:41–56. ຄມພ ທຳນາຍ, ການ ທຳນາຍ, ຄຳທຳນາຍ.

ວ່າ: ຂໍພຣະນາມຂອງພຣະເຈົ້າຈົ່ງພຣະກະ
ເສີມສຳລານເຖີດ, ເພາະເປັນຍ້ອນການ
ລ່ວງລະເມີດຂອງຂ້າພຣະອົງ, ຂ້າພຣະອົງ
ຈຶ່ງມີຄວາມເຂົ້າໃຈ, ແລະ ໃນຊີວິດນີ້ຂ້າ
ພຣະອົງຈະມີ [ຄ]ຄວາມສຸກ, ແລະ ໃນ [ງ]ເນື້ອ
ໜັງຂ້າພຣະອົງຈະໄດ້ເຫັນພຣະເຈົ້າອີກ.

11 ແລະ [ກ]ເອວາ, ເມຍຂອງລາວ, ໄດ້ຍິນ
ສິ່ງເຫລົ່ານີ້ທັງໝົດ ແລະ ໄດ້ຍິນດີ, ໂດຍ
ກ່າວວ່າ: ຖ້າຫາກບໍ່ແມ່ນເພາະການລ່ວງ
ລະເມີດຂອງພວກເຮົາ, ພວກເຮົາຄົງບໍ່
ມີ [ຂ]ພົງພັນ, ແລະ ຄົງບໍ່ເຄີຍຮູ້ຈັກຄວາມດີ
ແລະ ຄວາມຊົ່ວ, ແລະ ຄວາມສຸກຂອງການ
ໄຖ່, ແລະ ຊີວິດນິລັນດອນຊຶ່ງພຣະເຈົ້າໄດ້
ມອບໃຫ້ແກ່ທຸກຄົນທີ່ເຊື່ອຟັງ.

12 ແລະ ອາດາມກັບເອວາໄດ້ຖວາຍບາ
ລະມີແດ່ພຣະນາມຂອງພຣະເຈົ້າ, ແລະ
ພວກເຂົາໄດ້ເຮັດໃຫ້ເລື່ອງທັງໝົດເປັນ
ທີ່ [ກ]ຮູ້ຈັກແກ່ພວກລູກຊາຍ ແລະ ລູກສາວ
ຂອງພວກເຂົາ.

13 ແລະ [ກ]ຊາຕານ ໄດ້ມາໃນທ່າມກາງ
ພວກເຂົາ, ໂດຍກ່າວວ່າ: ເຮົາຄືບຸດຂອງ
ພຣະເຈົ້າ; ແລະ ມັນໄດ້ບັນຊາພວກເຂົາ,
ໂດຍກ່າວວ່າ: ຢ່າ [ຂ]ເຊື່ອ; ແລະ ພວກເຂົາບໍ່
ເຊື່ອ, ແລະ ພວກເຂົາ [ຄ]ຮັກຊາຕານຫລາຍ
ກວ່າພຣະເຈົ້າ. ແລະ ນັບຈາກເວລານັ້ນ
ເປັນຕົ້ນມາ ມະນຸດໄດ້ເລີ່ມມີ [ງ]ການມະລົນ,
ຕັນຫາໜ້າມືດ, ແລະ ຕ່ຳຊ້າ.

14 ແລະ ອົງພຣະຜູ້ເປັນເຈົ້າ ໄດ້ເອີ້ນ
ມະນຸດໃນທຸກຫົນທຸກແຫ່ງໂດຍ [ກ]ພຣະວິນ
ຍານບໍລິສຸດ ແລະ ໄດ້ບັນຊາພວກເຂົາວ່າ
ພວກເຂົາຄວນກັບໃຈ;

15 ແລະ ຫລາຍຕໍ່ຫລາຍຄົນທີ່ [ກ]ເຊື່ອໃນ
ພຣະບຸດ, ແລະ ກັບໃຈຈາກບາບຂອງພວກ
ເຂົາ, ຈະ [ຂ]ລອດ; ແລະ ຫລາຍຕໍ່ຫລາຍ
ຄົນທີ່ບໍ່ເຊື່ອໃນພຣະບຸດ, ແລະ ບໍ່ໄດ້ກັບ
ໃຈຈາກບາບຂອງພວກເຂົາ, ຈະ [ຄ]ອັບປະ
ໂຫຍດ; ແລະ ພຣະຄຳໄດ້ອອກໄປຈາກ
ພຣະໂອດຂອງພຣະເຈົ້າເປັນຄຳສັ່ງທີ່ໜັກ
ແໜ້ນ; ດັ່ງນັ້ນ ມັນຈຶ່ງຕ້ອງເກີດສຳເລັດຜົນ.

16 ແລະ ອາດາມກັບເອວາ, ເມຍຂອງ
ລາວ, ບໍ່ໄດ້ຢຸດເອີ້ນຫາພຣະເຈົ້າ. ແລະ
ອາດາມໄດ້ສົມສູ່ຢູ່ກັບເອວາ ເມຍຂອງ
ລາວ, ແລະ ນາງກໍໄດ້ຖືພາ ແລະ ເກີດລູກ
ຊາຍຊື່ວ່າ [ກ]ກາອິນ, ແລະ ໄດ້ກ່າວວ່າ: ຂ້າ
ພະເຈົ້າໄດ້ລູກຊາຍຈາກພຣະຜູ້ເປັນເຈົ້າ;
ດັ່ງນັ້ນ ລາວຈະບໍ່ປະຕິເສດພຣະຄຳຂອງ
ພຣະອົງ. ແຕ່ຈົ່ງເບິ່ງ, ກາອິນບໍ່ໄດ້ເຊື່ອຟັງ,
ໂດຍກ່າວວ່າ: ພຣະຜູ້ເປັນເຈົ້າຄືຜູ້ໃດທີ່ຂ້າ
ພະເຈົ້າຈະຕ້ອງຮູ້ຈັກພຣະອົງ?

17 ແລະ ນາງໄດ້ຖືພາອີກ ແລະ ໄດ້ເກີດ
ນ້ອງຊາຍຂອງລາວຊື່ວ່າ [ກ]ອາເບັນ. ແລະ
ອາເບັນໄດ້ [ຂ]ເຊື່ອຟັງສຸລະສຽງຂອງພຣະ
ຜູ້ເປັນເຈົ້າ. ແລະ ອາເບັນເປັນຄົນລ້ຽງຝູງ
ແກະ, ແຕ່ກາອິນເປັນພໍ່ນາ.

18 ແລະ ກາອິນ [ກ]ຮັກຊາຕານຫລາຍ
ກວ່າພຣະເຈົ້າ. ແລະ ຊາຕານໄດ້ບັນຊາ
ລາວ, ໂດຍກ່າວວ່າ: ຈົ່ງ [ຂ]ຖວາຍເຄື່ອງ
ບູຊາແດ່ພຣະຜູ້ເປັນເຈົ້າ.

10 *ຄ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
*ງ* ໂຢບ 19:26; 2 ນຟ 9:4.
11 *ກ* ຄມພ ເອວາ.
*ຂ* 2 ນຟ 2:22–23.
12 *ກ* ພບຍ 4:9.
13 *ກ* ຄມພ ມານ.
*ຂ* ຄມພ ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.
*ຄ* ມຊ 6:15.
*ງ* ຄມພ ການມະລົນ; ມະນຸດທີ່ມີຈິດໃຈທຳມະດາ.
14 *ກ* ຢຣ 14:16–18, 26.
15 *ກ* ຄມພ ເຊື່ອ, ຄວາມເຊື່ອ.
*ຂ* ຄມພ ລອດ, ຄວາມລອດ.
*ຄ* ຄພ 42:60.
ຄມພ ອັບປະໂຫຍດ, ຄວາມອັບປະໂຫຍດ.
16 *ກ* ປຖກ 4:1–2.
ຄມພ ກາອິນ.
17 *ກ* ຄມພ ອາເບັນ.
*ຂ* ຮຣ 11:4.
18 *ກ* ຄພ 10:20–21.
*ຂ* ຄພ 132:8–11.

19 ແລະ ຕາມຄວາມສົມຄວນຂອງເວລາ
ເຫດການໄດ້ບັງເກີດຂຶ້ນຄື ກາອິນໄດ້ເອົາ
ຜົນລະປູກມາຖວາຍແດ່ພຣະຜູ້ເປັນເຈົ້າ.
20 ແລະ ອາເບັນ, ລາວກໍໄດ້ເອົາລູກແກະ
ເຖິກຫົວປີໂຕໜຶ່ງໃນຝູງຂອງລາວມາຂ້າ,
ແລະ ເອົາເນື້ອສ່ວນທີ່ດີທີ່ສຸດມາຖວາຍ.
ແລະ ພຣະຜູ້ເປັນເຈົ້າຈຶ່ງພໍພຣະໄທກັບອາ
ເບັນ, ແລະ ກັບ [ກ]ເຄື່ອງຖວາຍຂອງລາວ;
21 ແຕ່ກັບກາອິນ, ແລະ ກັບ [ກ]ເຄື່ອງ
ຖວາຍຂອງລາວ, ພຣະອົງບໍ່ພໍພຣະໄທນຳ.
ບັດນີ້ ຊາຕານໄດ້ຮູ້ເຖິງເລື່ອງນີ້, ແລະ ນີ້
ເຮັດໃຫ້ມັນພໍໃຈຫລາຍ. ແລະ ກາອິນຈຶ່ງ
ຄຽດແຄ້ນ, ແລະ ໜ້າບູດບຶ້ງ.
22 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບກາ
ອິນວ່າ: ເປັນຫຍັງເຈົ້າຈຶ່ງຄຽດແຄ້ນ? ເປັນ
ຫຍັງເຈົ້າຈຶ່ງໜ້າບູດບຶ້ງ?
23 ຖ້າຫາກເຈົ້າເຮັດໃນສິ່ງທີ່ດີ ແລ້ວເຈົ້າ
ຈະຖືກ [ກ]ຮັບໄວ້. ແລະ ຖ້າຫາກເຈົ້າເຮັດ
ໃນສິ່ງທີ່ບໍ່ດີ, ແລ້ວບາບກໍຢູ່ທີ່ປະຕູ, ແລະ
ຊາຕານປາດຖະໜາທີ່ຈະໄດ້ເຈົ້າ; ແລະ
ຍົກເວັ້ນແຕ່ເຈົ້າຈະເຊື່ອຟັງບັນຍັດຂອງ
ເຮົາ, ເຮົາຈະມອບເຈົ້າໃຫ້ມັນ, ແລະ ຈະ
ເກີດກັບເຈົ້າຕາມຄວາມປາດຖະໜາຂອງ
ມັນ. ແລະ ເຈົ້າຈະປົກຄອງເໜືອມັນ;
24 ເພາະນັບແຕ່ເວລານີ້ເປັນຕົ້ນໄປ
ເຈົ້າຈະຖືກເອີ້ນວ່າບິດາແຫ່ງຄວາມຕົວະ
ຂອງມັນ; ເຈົ້າຈະຖືກເອີ້ນວ່າ [ກ]ຜູ້ຈິບຫາຍ;
ເພາະວ່າເຈົ້າໄດ້ດຳລົງຢູ່ກ່ອນໂລກນີ້ເຊັ່ນ
ດຽວກັນ.
25 ແລະ ຈະມີການກ່າວໄວ້ໃນເວລາທີ່
ຈະມາເຖິງ—ວ່າ [ກ]ຄວາມໜ້າກຽດຊັງເຫລົ່າ
ນີ້ມີມານັບແຕ່ກາອິນ; ເພາະວ່າລາວໄດ້ປະ
ຕິເສດຄຳແນະນຳອັນຍິ່ງໃຫຍ່ກວ່າ ຊຶ່ງມາ
ຈາກພຣະເຈົ້າ; ແລະ ນີ້ເປັນການສາບແຊ່ງ
ຊຶ່ງເຮົາຈະມອບໃຫ້ເຈົ້າ, ຍົກເວັ້ນແຕ່ເຈົ້າ
ຈະກັບໃຈ.
26 ແລະ ກາອິນໄດ້ຄຽດແຄ້ນ, ແລະ ບໍ່
ຟັງສຸລະສຽງຂອງພຣະຜູ້ເປັນເຈົ້າອີກຕໍ່ໄປ,
ທັງບໍ່ຟັງສຽງຂອງອາເບັນຄືກັນ, ນ້ອງຊາຍ
ຂອງລາວ, ຜູ້ໄດ້ເດີນໄປໃນຄວາມສັກສິດ
ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.
27 ແລະ ອາດາມກັບເມຍຂອງລາວກໍມີ
ຄວາມໂສກເສົ້າຫລາຍຢູ່ຕໍ່ພຣະພັກຂອງ
ພຣະຜູ້ເປັນເຈົ້າ, ເພາະກາອິນ ແລະ ອ້າຍ
ນ້ອງຂອງລາວ.
28 ແລະ ເຫດການໄດ້ບັງເກີດຂຶ້ນຄື ກາ
ອິນໄດ້ເອົາລູກສາວຂອງອ້າຍນ້ອງຂອງ
ລາວມາເປັນເມຍ, ແລະ ພວກເຂົາ [ກ]ຮັກ
ຊາຕານຫລາຍກວ່າພຣະເຈົ້າ.
29 ແລະ ຊາຕານ ໄດ້ກ່າວກັບກາອິນ
ວ່າ: ຈົ່ງສາບານກັບຂ້າພະເຈົ້າໂດຍຄໍຂອງ
ທ່ານ, ແລະ ຖ້າຫາກທ່ານເປີດເຜີຍເລື່ອງ
ນີ້ ທ່ານຈະຕາຍ; ແລະ ໃຫ້ອ້າຍນ້ອງຂອງ
ທ່ານສາບານດ້ວຍຫົວຂອງພວກເຂົາ,
ແລະ ໂດຍ ພຣະເຈົ້າທີ່ຊົງພຣະຊົນຢູ່, ວ່າ
ພວກເຂົາຈະບໍ່ເປີດເຜີຍເລື່ອງນີ້; ເພາະວ່າ
ຖ້າຫາກພວກເຂົາເປີດເຜີຍ, ພວກເຂົາຈະ
ຕາຍຢ່າງແນ່ນອນ; ແລະ ການນີ້ເພື່ອບໍ່ໃຫ້
ບິດາຂອງທ່ານຮູ້ຈັກ; ແລະ ມື້ນີ້ຂ້າພະເຈົ້າ
ຈະມອບອາເບັນນ້ອງຊາຍຂອງທ່ານໃຫ້
ຕົກຢູ່ໃນກຳມືຂອງທ່ານ.
30 ແລະ ຊາຕານໄດ້ສາບານກັບກາອິນ
ວ່າ ມັນຈະເຮັດຕາມຄຳສັ່ງຂອງລາວ. ແລະ
ສິ່ງເຫລົ່ານີ້ທັງໝົດໄດ້ເຮັດເປັນການລັບ.

20 *ກ* ຄມພ ເຄື່ອງຖວາຍ; ເສຍສະລະ, ການເສຍສະລະ.
21 *ກ* ປຖກ 4:3–7.
23 *ກ* ປຖກ 4:7; ຄພ 52:15; 97:8.
24 *ກ* ຄມພ ບຸດແຫ່ງຄວາມຈິບຫາຍ.
25 *ກ* ຣລມ 6:26–28.
28 *ກ* ມຊ 5:13.

31 ແ ລະ ກາ ອິນ ໄດ້ ກ່າວ ວ່າ: ຂ້າ ພະ
ເຈົ້າຄືເມຮັນຢ່າງແນ່ແທ້, ເຈົ້າແຫ່ງຄວາມ
ລັບອັນຍິ່ງໃຫຍ່ນີ້, ວ່າຂ້າພະເຈົ້າສາມາດ
[ກ]ຄາດຕະກຳ ແລະ ຫາຜົນປະໂຫຍດ. ດັ່ງ
ນັ້ນກາອິນຈຶ່ງຖືກເອີ້ນວ່າ ເຈົ້າ [ຂ]ເມຮັນ,
ແລະ ລາວໄດ້ພາກພູມໃຈກັບຄວາມຊົ່ວ
ຮ້າຍຂອງລາວ.
32 ແລະ ກາອິນໄດ້ລົງໄປໃນທົ່ງ, ແລະ
ກາອິນໄດ້ເວົ້າລົມກັບອາເບັນ, ນ້ອງຊາຍ
ຂອງລາວ. ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ໃນຂະນະທີ່ພວກເຂົາຢູ່ໃນທົ່ງ, ກາອິນ
ໄດ້ໂດດໃສ່ອາເບັນ, ນ້ອງຊາຍຂອງລາວ,
ແລະ ໄດ້ຂ້າລາວເສຍ.
33 ແລະ ກາອິນໄດ້ [ກ]ພາກພູມໃຈກັບສິ່ງ
ທີ່ລາວໄດ້ເຮັດລົງໄປ, ໂດຍກ່າວວ່າ: ຂ້າ
ພະເຈົ້າເປັນອິດສະລະແລ້ວ; ຝູງສັດຂອງ
ນ້ອງຊາຍຂອງຂ້າພະເຈົ້າກໍຈະຕົກຢູ່ໃນມື
ຂອງຂ້າພະເຈົ້າຢ່າງແນ່ນອນ.
34 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບກາ
ອິນວ່າ: ອາເບັນ, ນ້ອງຊາຍຂອງເຈົ້າຢູ່ໃສ?
ແລະ ລາວໄດ້ກ່າວວ່າ: ຂ້າພຣະອົງບໍ່ຮູ້. ຂ້າ
ພຣະອົງເປັນ [ກ]ຄົນດູແລຮັກສານ້ອງຊາຍ
ຊັ້ນບໍ?
35 ແລະ ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວ ວ່າ:
ເຈົ້າໄດ້ເຮັດຫຍັງລົງໄປ? ເລືອດຂອງນ້ອງ
ຊາຍຂອງເຈົ້າໄດ້ຟ້ອງຮ້ອງຂຶ້ນມາຫາເຮົາ
ຈາກພື້ນດິນ.
36 ແລະ ບັດນີ້ເຈົ້າຈະຖືກສາບແຊ່ງຈາກ
ແຜ່ນດິນບ່ອນທີ່ໄດ້ອ້າປາກຮັບເອົາເລືອດ
ຂອງນ້ອງຊາຍຂອງເຈົ້າຈາກມືຂອງເຈົ້າ.
37 ເມື່ອເຈົ້າເຮັດໄຮ່ໄຖນາຢູ່ບ່ອນນີ້ ມັນ
ຈະບໍ່ເກີດຜົນ. ເຈົ້າຈະ [ກ]ບໍ່ມີທີ່ຢູ່ ແລະ ຈະ
ພະເນຈອນໄປເທິງແຜ່ນດິນໂລກ.
38 ແລະ ກາອິນໄດ້ກ່າວກັບພຣະຜູ້ເປັນ
ເຈົ້າວ່າ: ຊາຕານ ໄດ້ [ກ]ລໍ້ລວງຂ້າພຣະອົງ
ເນື່ອງດ້ວຍຝູງສັດຂອງນ້ອງຊາຍຂອງຂ້າ
ພຣະອົງ. ແລະ ຂ້າພຣະອົງກໍຄຽດແຄ້ນນຳ
ອີກ; ເພາະເຄື່ອງຖວາຍຂອງລາວ ພຣະອົງ
ໄດ້ຮັບເອົາ ແລະ ບໍ່ໄດ້ຮັບເອົາເຄື່ອງຖວາຍ
ຂອງຂ້າພຣະອົງ; ໂທດນີ້ໜັກເກີນກວ່າທີ່
ຂ້າພຣະອົງຈະຮັບໄດ້.
39 ຈົ່ງ ເບິ່ງ ພຣະອົງໄດ້ຂັບໄລ່ຂ້າພຣະ
ອົງໃຫ້ອອກໄປມື້ນີ້ຈາກພຣະພັກຂອງພຣະ
ຜູ້ເປັນ ເຈົ້າ, ແລະ ໃຫ້ພົ້ນຈາກພຣະພັກ
ຂອງພຣະອົງ; ແລະ ຂ້າພຣະອົງຈະບໍ່ມີທີ່ຢູ່
ແລະ ຈະພະເນຈອນໄປເທິງແຜ່ນດິນໂລກ;
ແລະ ເຫດການຈະບັງເກີດຂຶ້ນຄື, ຖ້າຫາກ
ຜູ້ໃດຜູ້ໜຶ່ງພົບເຫັນຂ້າພຣະອົງ, ເຂົາກໍຈະ
ສັງຫານຂ້າພຣະອົງເສຍ, ເພາະຄວາມຊົ່ວ
ຮ້າຍຂອງຂ້າພຣະອົງ, ເພາະວ່າສິ່ງເຫລົ່ານີ້
ບໍ່ໄດ້ຖືກປິດບັງຈາກພຣະຜູ້ເປັນເຈົ້າ.
40 ແລະ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວ
ກັບລາວວ່າ: ຜູ້ໃດກໍຕາມທີ່ຂ້າເຈົ້າ, ການ
ແກ້ແຄ້ນຈະເກີດກັບເຂົາເຈັດເທົ່າ. ແລະ
ເຮົາພຣະຜູ້ເປັນເຈົ້າໄດ້ເຮັດ [ກ]ເຄື່ອງໝາຍ
ໄວ້ໃນຕົວຂອງກາອິນ, ຖ້າບໍ່ດັ່ງນັ້ນຄົນທີ່
ພົບເຫັນລາວ ຈະຂ້າລາວ.
41 ແລະ ກາອິນໄດ້ຖືກກັນໄວ້ຈາກ [ກ]ທີ່
ປະທັບຂອງພຣະຜູ້ເປັນເຈົ້າ, ແລະ ເມຍ
ຂອງລາວ ແລະ ອ້າຍນ້ອງຫລາຍຄົນຂອງ
ລາວໄດ້ອາໄສຢູ່ແຜ່ນດິນໂນດ, ທາງເບື້ອງ
ຕາເວັນອອກຂອງເອເດນ.

---

31 *ກ* ຄມພ ຄາດຕະກຳ, ການຄາດຕະກຳ.
*ຂ* ອສ "ຄວາມຄິດ," "ຜູ້ທຳລາຍ," ແລະ "ຜູ້ຍິ່ງໃຫຍ່" ອາດເປັນຄວາມໝາຍທີ່ເປັນໄປໄດ້ ຂອງຫລັກຖານກົກເຫງົ້າ ໃນ "ເມຮັນ."
33 *ກ* ຄມພ ຄວາມເປັນຢູ່ທາງໂລກ; ຈອງຫອງ, ຄວາມຈອງຫອງ.
34 *ກ* ປຖກ 4:9.
37 *ກ* ປຖກ 4:11–12.
38 *ກ* ຄມພ ໂລບ, ຄວາມໂລບ; ລໍ້ລວງ, ການລໍ້ລວງ.
40 *ກ* ປຖກ 4:15.
41 *ກ* ມຊ 6:49.

42 ແລະ ການອິນໄດ້ສົມສູ່ຢູ່ກັບເມຍຂອງ
ລາວ, ແລະ ນາງໄດ້ຕັ້ງທ້ອງ ແລະ ໄດ້
ເກີດລູກຊາຍຊື່ວ່າເອນົກ, ແລະ ລາວກໍມີ
ລູກຊາຍ ແລະ ລູກສາວຫລາຍຄົນນຳອີກ.
ແລະ ລາວໄດ້ສ້າງເມືອງໜຶ່ງຂຶ້ນ, ແລະ
ລາວໄດ້ເອີ້ນຊື່ [ກ]ເມືອງວ່າເອນົກ ຕາມຊື່
ຂອງລູກຊາຍຂອງລາວ.
43 ແລະ ເອນົກໄດ້ລູກຊາຍຊື່ອີລາດ,
ແລະ ລູກຊາຍ ແລະ ລູກສາວຄົນອື່ນໆ.
ແລະ ອີລາດໄດ້ລູກຊາຍຊື່ເມຮູຢາເອນ,
ແລະ ລູກຊາຍ ແລະ ລູກສາວຄົນອື່ນໆ.
ແລະ ເມຮູຢາເອນໄດ້ລູກຊາຍຊື່ເມທູຊາ
ເອນ, ແລະ ລູກຊາຍ ແລະ ລູກສາວຄົນ
ອື່ນໆ. ແລະ ເມທູຊາເອນໄດ້ລູກຊາຍຊື່ລາ
ເມັກ.
44 ແລະ ລາເມັກໄດ້ຮັບເອົາຍິງສອງຄົນ
ມາເປັນເມຍ; ຄົນໜຶ່ງຊື່ວ່າອາດາ, ແລະ
ອີກຄົນໜຶ່ງຊື່ວ່າຊິນລາ.
45 ແລະ ອາດາໄດ້ລູກຊາຍຊື່ຢາບານ;
ລາວເປັນບັນພະບຸລຸດຂອງພວກທີ່ອາໄສ
ຢູ່ໃນຜ້າເຕັ້ນ, ແລະ ພວກເຂົາເປັນຄົນລ້ຽງ
ສັດ; ແລະ ນ້ອງຊາຍຂອງລາວມີຊື່ວ່າ ຢູ
ບານ, ເປັນບັນພະບຸລຸດຂອງພວກທີ່ດີດ
ພິນ ແລະ ເປົ່າຄຸ່ຍ.
46 ແລະ ຊິນລາ, ນາງກໍໄດ້ລູກຊາຍຄົນ
ໜຶ່ງຄືກັນຊື່ຕູບາການອິນ, ເປັນຊ່າງຕີເຄື່ອງມື
ເປັນທອງສຳເລັດ ແລະ ເຫລັກ. ແລະ ຕູບາ
ການອິນມີນ້ອງສາວຄົນໜຶ່ງຊື່ວ່າ ນາອາມາ.
47 ແລະ ລາເມັກໄດ້ກ່າວກັບເມຍຂອງ
ລາວ, ອາດາ ແລະ ຊິນລາວ່າ: ຈົ່ງຟັງສຽງ
ຂອງອ້າຍ, ພວກນ້ອງຜູ້ເປັນເມຍຂອງລາ
ເມັກ, ຈົ່ງເຊື່ອຟັງຖ້ອຍຄຳຂອງອ້າຍ; ເພາະ
ອ້າຍໄດ້ສັງຫານຊາຍໜຸ່ມຄົນໜຶ່ງ ເພາະວ່າ
ລາວໄດ້ຕີອ້າຍໃຫ້ບອບຊ້ຳ.
48 ຖ້າຫາກການອິນຈະຖືກແກ້ແຄ້ນເຖິງ
ເຈັດເທົ່າ, ແລ້ວລາເມັກຈະເປັນເຖິງ [ກ]ເຈັດ
ສິບເຈັດເທົ່າ;
49 ເພາະວ່າລາເມັກໂດຍທີ່ໄດ້ເຂົ້າເຮັດ
[ກ]ພັນທະສັນຍາກັບຊາຕານ, ຕາມວິທີຂອງ
ການອິນ, ຊຶ່ງໃນການນີ້ ລາວໄດ້ກາຍເປັນ
ເຈົ້າເມຮັນ, ເປັນເຈົ້າແຫ່ງຄວາມລັບອັນຍິ່ງ
ໃຫຍ່ ຊຶ່ງຊາຕານໄດ້ມອບໃຫ້ການອິນ; ແລະ
ອີລາດ, ລູກຊາຍຂອງເອນົກ, ໂດຍທີ່ຮູ້ຈັກ
ຄວາມລັບຂອງພວກເຂົາ, ໄດ້ເລີ່ມເປີດ
ເຜີຍມັນກັບບັນດາລູກຊາຍຂອງອາດາມ;
50 ດັ່ງນັ້ນ ລາເມັກ, ໂດຍທີ່ຄຽດແຄ້ນ,
ໄດ້ຂ້າລາວ, ບໍ່ເໝືອນການອິນ, ໄດ້ຂ້າອາ
ເບັນນ້ອງຊາຍຂອງລາວ, ເພື່ອເຫັນແກ່
ການຫາຜົນປະໂຫຍດ, ແຕ່ລາວໄດ້ຂ້າ
ລາວເພື່ອເຫັນແກ່ຄຳສາບານ.
51 ເພາະ, ນັບແຕ່ວັນເວລາຂອງການອິນ,
ມັນໄດ້ມີ [ກ]ການມົ້ວສຸມລັບ, ແລະ ວຽກງານ
ຂອງພວກເຂົາໄດ້ຢູ່ໃນຄວາມມືດ, ແລະ
ພວກເຂົາໄດ້ຮູ້ຈັກອ້າຍນ້ອງຂອງພວກເຂົາ
ທຸກຄົນ.
52 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງໄດ້ສາບ
ແຊ່ງລາເມັກ, ແລະ ຄົວເຮືອນຂອງລາວ,
ແລະ ທຸກຄົນທີ່ໄດ້ເຮັດພັນທະສັນຍາກັບ
ຊາຕານ; ເພາະວ່າພວກເຂົາບໍ່ໄດ້ຮັກສາ
ພຣະບັນຍັດຂອງພຣະເຈົ້າ, ແລະ ສິ່ງນີ້ໄດ້

42 *ກ* ອສ ມີຊາຍຄົນໜຶ່ງຊື່ວ່າເອ
ນົກ ຈາກເຊື້ອສາຍຂອງກາ
ອິນ, ແລະ ມີເມືອງໜຶ່ງທີ່
ເອີ້ນຕາມຊື່ນັ້ນ ໃນບັນດາ
ຜູ້ຄົນຂອງລາວ. ຢ່າສັບ
ສົນຄິດວ່າ ເປັນຄົນດຽວ
ກັນກັບເອນົກ ຈາກເຊື້ອ
ສາຍທີ່ຊອບທຳຂອງເຊດ
ແລະ ເມືອງຂອງເພິ່ນຊື່ ຊີ
ໂອນ, ຊຶ່ງກໍຖືກເອີ້ນວ່າ
“ເມືອງເອນົກ” ຄືກັນ.
48 *ກ* ອສ ລາເມັກໄດ້ເວົ້າອວດ
ອ້າງວ່າ ຊາຕານໄດ້ເຮັດ
ເພື່ອລາວ ຫລາຍກວ່າຊາ
ຕານໄດ້ເຮັດເພື່ອການອິນ.
ເຫດຜົນທີ່ລາວຄິດວ່າມັນ
ເປັນແນວນັ້ນ ມີຢູ່ໃນ ຂໍ້
ທີ 49 ແລະ 50.
ປຖກ 4:24.
49 *ກ* ຄມພ ຄຳສາບານ.
51 *ກ* ຄມພ ການມົ້ວສຸມລັບ.

ເຮັດໃຫ້ພຣະເຈົ້າບໍ່ພໍພຣະໄທ, ແລະ ພຣະ
ອົງບໍ່ໄດ້ປະຕິບັດຕໍ່ພວກເຂົາ, ແລະ ວຽກ
ງານຂອງພວກເຂົາໄດ້ເປັນສິ່ງທີ່ໜ້າກຽດ
ຊັງ, ແລະ ໄດ້ເລີ່ມຂະຫຍາຍອອກໄປທົ່ວ
ໃນບັນດາ ກພວກລູກຊາຍທັງປວງຂອງ
ມະນຸດ. ແລະ ມັນໄດ້ຢູ່ໃນບັນດາພວກລູກ
ຊາຍຂອງມະນຸດ.

53 ແລະ ໃນບັນດາພວກລູກສາວຂອງ
ມະນຸດ ສິ່ງເຫລົ່ານີ້ບໍ່ໄດ້ຖືກກ່າວເຖິງ,
ເພາະວ່າລາເມັກໄດ້ເປີດເຜີຍຄວາມລັບໃຫ້
ພວກເມຍຂອງລາວຟັງ, ແລະ ພວກນາງ
ໄດ້ກະບົດຕໍ່ລາວ, ແລະ ໄດ້ປະກາດສິ່ງ
ເຫລົ່ານີ້ໄປທົ່ວ, ແລະ ບໍ່ມີຄວາມສົງສານ;

54 ດັ່ງນັ້ນ ລາເມັກຈຶ່ງຖືກກຽດຊັງ, ແລະ
ຖືກໄລ່ໜີ, ແລະ ບໍ່ໄດ້ຢູ່ໃນບັນດາພວກລູກ
ຊາຍມະນຸດ, ຖ້າບໍ່ດັ່ງນັ້ນລາວຈະຖືກຂ້າ.

55 ແລະ ວຽກງານແຫ່ງ ກຄວາມມືດຈຶ່ງ
ໄດ້ເລີ່ມແຜ່ອອກໄປໃນບັນດາພວກລູກ
ຊາຍທັງປວງຂອງມະນຸດດັ່ງນັ້ນ.

56 ແລະ ພຣະເຈົ້າໄດ້ສາບແຊ່ງຜືນແຜ່ນ
ດິນດ້ວຍການສາບແຊ່ງອັນສາຫັດ, ແລະ
ໄດ້ພຣະພິໂລດໃຫ້ຄົນຊົ່ວ, ກັບພວກລູກ
ຊາຍທັງປວງຂອງມະນຸດຜູ້ທີ່ພຣະອົງໄດ້
ສ້າງຂຶ້ນ;

57 ເພາະວ່າພວກເຂົາບໍ່ໄດ້ເຊື່ອຟັງສຸລະ
ສຽງຂອງພຣະອົງ, ທັງບໍ່ເຊື່ອໃນ ກພຣະບຸດ
ອົງດຽວທີ່ຖືກກຳເນີດຂອງພຣະອົງ, ແມ່ນແຕ່
ຜູ້ທີ່ພຣະອົງໄດ້ປະກາດວ່າ ຈະສະເດັດມາ
ໃນເວລາອັນຮຸ່ງໂລດ, ຜູ້ໄດ້ຖືກຕຽມໄວ້ນັບ
ແຕ່ກ່ອນການວາງຮາກຖານຂອງໂລກ.

58 ແລະ ດັ່ງນັ້ນຈຶ່ງໄດ້ເລີ່ມມີການສັ່ງ
ສອນ ກພຣະກິດຕິຄຸນ, ຕັ້ງແຕ່ຕົ້ນ, ດ້ວຍ
ການປະກາດໂດຍ ຂເຫລົ່າທູດຜູ້ບໍລິສຸດ
ທີ່ຖືກສົ່ງມາຈາກທີ່ປະທັບຂອງພຣະເຈົ້າ,
ແລະ ໂດຍສຸລະສຽງຂອງພຣະອົງເອງ,
ແລະ ໂດຍ ຄຂອງປະທານແຫ່ງພຣະວິນ
ຍານບໍລິສຸດ.

59 ແລະ ທຸກສິ່ງທັງປວງຈຶ່ງຖືກຢືນຢັນ
ກັບອາດາມດັ່ງນັ້ນ, ໂດຍພິທີການສັກສິດ,
ແລະ ພຣະກິດຕິຄຸນຖືກສັ່ງສອນ, ແລະ ຄຳ
ສັ່ງຖືກສົ່ງອອກໄປ, ວ່າມັນຈະຢູ່ໃນໂລກນີ້,
ຈົນເຖິງທີ່ສຸດຂອງມັນ; ແລະ ມັນເປັນໄປດັ່ງ
ນັ້ນ. ອາແມນ.

## ບົດທີ 6
(ເດືອນພະຈິກ–ເດືອນທັນວາ 1830)

*ເຊື້ອສາຍຂອງອາດາມ ຮັກສາປຶ້ມແຫ່ງຄວາມຊົງຈຳ—ລູກຫລານທີ່ຊອບທຳຂອງລາວສັ່ງສອນການກັບໃຈ—ພຣະເຈົ້າເປີດເຜີຍພຣະອົງເອງຕໍ່ເອນົກ—ເອນົກສັ່ງສອນພຣະກິດຕິຄຸນ—ແຜນແຫ່ງຄວາມລອດໄດ້ຖືກເປີດເຜີຍແກ່ອາດາມ—ລາວໄດ້ຮັບບັບຕິສະມາ ແລະ ຖານະປະໂລຫິດ.*

1 ແລະ ກອາດາມໄດ້ເຊື່ອຟັງສຸລະສຽງ
ຂອງພຣະເຈົ້າ, ແລະ ໄດ້ເອີ້ນພວກລູກ
ຊາຍຂອງລາວໃຫ້ກັບໃຈ.

2 ແລະ ອາດາມໄດ້ສົມສູ່ຢູ່ກັບເມຍຂອງ
ລາວອີກ, ແລະ ນາງໄດ້ເກີດລູກຊາຍຄົນ
ໜຶ່ງ, ແລະ ລາວໄດ້ເອີ້ນລາວວ່າ ກເຊດ.
ແລະ ອາດາມໄດ້ສັນລະເສີນພຣະນາມ
ຂອງພຣະເຈົ້າ; ເພາະລາວໄດ້ກ່າວວ່າ:

52 ກ ມຊ 8:14–15.
55 ກ ຄມພ ຄວາມມືດທາງວິນຍານ; ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.
57 ກ ຄມພ ພຣະເຢຊູຄຣິດ.
58 ກ ຄມພ ພຣະກິດຕິຄຸນ.
ຂ ແອວ 12:28–30; ມຣນ 7:25, 29–31. ຄມພ ທູດ, ເທວະດາ.
ຄ ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
6 1 ກ ຄມພ ອາດາມ.
2 ກ ປຖກ 4:25. ຄມພ ເຊດ.

ພຣະ ເຈົ້າ ໄດ້ປະທານລູກຊາຍອີກຄົນໜຶ່ງ
ໃຫ້ຂ້າພະເຈົ້າ, ແທນອາເບັນ, ຜູ້ໄດ້ຖືກກາ
ອິນສັງຫານ.
3 ແລະ ພຣະເຈົ້າໄດ້ເປີດເຜີຍພຣະອົງ
ເອງຕໍ່ເຊດ, ແລະ ລາວບໍ່ໄດ້ກະບົດ, ແຕ່
ໄດ້ [ກ]ຖວາຍເຄື່ອງບູຊາອັນເປັນທີ່ຍອມຮັບ,
ເໝືອນອາເບັນອ້າຍຂອງລາວ. ແລະ ລາວ
ໄດ້ມີລູກຊາຍຄົນໜຶ່ງ, ແລະ ລາວໄດ້ເອີ້ນ
ລາວວ່າ ເອໂນດ.
4 ແລະ ຈາກນັ້ນມາ ຊາຍເຫລົ່ານີ້ໄດ້ເລີ່ມ
[ກ]ເອີ້ນຫາພຣະນາມຂອງພຣະຜູ້ເປັນເຈົ້າ,
ແລະ ພຣະຜູ້ເປັນເຈົ້າ ໄດ້ອວຍພອນພວກ
ເຂົາ;
5 ແລະ [ກ]ປຶ້ມ ແຫ່ງ ຄວາມ ຊົງ ຈຳ ໄດ້ ຖືກ
ຮັກສາໄວ້, ຊຶ່ງໃນນັ້ນມີບັນທຶກໄວ້, ໃນພາ
ສາຂອງອາດາມ, ເພາະມັນໄດ້ຖືກມອບ
ໃຫ້ຫລາຍຕໍ່ຫລາຍຄົນທີ່ເອີ້ນຫາພຣະເຈົ້າ
ເພື່ອໃຫ້ຂຽນໂດຍວິນຍານແຫ່ງ [ຂ]ການດົນ
ໃຈ;
6 ແລະ ໂດຍພວກເຂົາລູກຫລານຂອງ
ພວກເຂົາຈຶ່ງໄດ້ຮັບການສິດສອນໃຫ້ອ່ານ
ແລະ ຂຽນ, ໂດຍມີພາສາຊຶ່ງບໍລິສຸດ ແລະ
ບໍ່ເສື່ອມໂຊມ.
7 ບັດນີ້ [ກ]ຖານະປະໂລຫິດດຽວກັນນີ້, ຊຶ່ງ
ຢູ່ໃນຕອນຕົ້ນ, ຈະຢູ່ໃນຄາວສິ້ນສຸດໂລກຄື
ກັນ.
8 ບັດນີ້ ຄຳທຳນາຍນີ້ອາດາມໄດ້ກ່າວ
ໄວ້, ດັ່ງທີ່ລາວໄດ້ຮັບການດົນໃຈໂດຍ
[ກ]ພຣະວິນຍານບໍລິສຸດ, ແລະ [ຂ]ລຳດັບເຊື້ອ
ສາຍຂອງ [ຄ]ລູກໆຂອງພຣະເຈົ້າໄດ້ຖືກຮັກ
ສາໄວ້. ແລະ ນີ້ຄື [ງ]ປຶ້ມລຳດັບການສືບເຊື້ອ
ສາຍຂອງອາດາມ, ກ່າວວ່າ: ໃນມື້ທີ່ພຣະ
ເຈົ້າໄດ້ສ້າງມະນຸດ, ໃນຮູບຮ່າງລັກສະນະ
ທີ່ຄ້າຍຄືກັນກັບພຣະເຈົ້າພຣະອົງໄດ້ສ້າງ
ລາວ;
9 ໃນ [ກ]ຮູບຮ່າງລັກສະນະທີ່ເໝືອນຮູບ
ຮ່າງຂອງພຣະອົງ, ຊາຍ ແລະ ຍິງ, ພຣະອົງ
ໄດ້ສ້າງ [ຂ]ພວກເຂົາ, ແລະ ໄດ້ອວຍພອນ
ພວກເຂົາ, ແລະ ໄດ້ເອີ້ນ [ຄ]ຊື່ພວກເຂົາວ່າ
ອາດາມ, ໃນມື້ທີ່ພວກເຂົາໄດ້ຖືກສ້າງຂຶ້ນ
ມາ ແລະ ໄດ້ກາຍເປັນ [ງ]ຈິດວິນຍານທີ່ມີຊີ
ວິດຢູ່ໃນແຜ່ນດິນ [ຈ]ທີ່ຮອງພຣະບາດຂອງ
ພຣະເຈົ້າ.
10 ແລະ ເມື່ອ [ກ]ອາດາມມີອາຍຸໄດ້ໜຶ່ງ
ຮ້ອຍສາມສິບປີ, ລາວໄດ້ມີລູກຊາຍຄົນໜຶ່ງ
ທີ່ຄ້າຍຄືກັນກັບລາວ, ມີ [ຂ]ຮູບຮ່າງລັກສະ
ນະຄືກັນກັບລາວເອງ, ແລະ ເອີ້ນລາວວ່າ
ເຊດ.
11 ແລະ ອາດາມໄດ້ມີຊີວິດຢູ່ຕໍ່ໄປອີກ,
ຫລັງຈາກລາວໄດ້ເຊດ, ແປດຮ້ອຍປີ, ແລະ
ລາວກໍມີລູກຊາຍ ແລະ ລູກສາວອີກຫລາຍ
ຄົນ;
12 ແລະ ວັນເວລາທັງໝົດທີ່ອາດາມມີຊີ
ວິດຢູ່ຄືເກົ້າຮ້ອຍສາມສິບປີ, ແລະ ລາວໄດ້
ຕາຍໄປ.
13 ເມື່ອ ເຊດ ມີ ອາ ຍຸ ໄດ້ ໜຶ່ງ ຮ້ອຍ ຫ້າ
ປີ, ລາວໄດ້ເອໂນດ, ແລະ ໄດ້ທຳນາຍ
ຕະຫລອດວັນເວລາຂອງລາວ, ແລະ ໄດ້

---

3 *ກ* ຄມພ ເສຍສະລະ, ການເສຍສະລະ.
4 *ກ* ປຖກ 4:26. ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
5 *ກ* ອຮຮ 1:28, 31. ຄມພ ປຶ້ມແຫ່ງຄວາມຊົງຈຳ.
*ຂ* ຄມພ ດົນໃຈ, ການດົນໃຈ.
7 *ກ* ຄມພ ຖານະປະໂລຫິດ.
8 *ກ* 2 ປຕ 1:21.
*ຂ* ຄມພ ລຳດັບການສືບເຊື້ອສາຍ.
*ຄ* ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
*ງ* ປຖກ 5:1.
9 *ກ* ປຖກ 1:26–28; ມຊ 2:26–29; ອຮຮ 4:26–31.
*ຂ* ຄມພ ມະນຸດ.
*ຄ* ມຊ 1:34; 4:26.
*ງ* ຄມພ ຈິດວິນຍານ.
*ຈ* ອຮຮ 2:7.
10 *ກ* ຄພ 107:41–56.
*ຂ* ປຖກ 5:3; ຄພ 107:42–43; 138:40.

ສິດສອນເອໂນດລູກຊາຍຂອງລາວໃນວິທີທາງຂອງພຣະເຈົ້າ; ດັ່ງນັ້ນ ເອໂນດຈຶ່ງໄດ້ທຳນາຍຄືກັນ.

14 ແລະ ເຊດໄດ້ມີອາຍຸຢູ່ຕໍ່ໄປອີກ, ຫລັງຈາກໄດ້ເອໂນດ, ແປດຮ້ອຍເຈັດປີ, ແລະ ກໍມີລູກຊາຍ ແລະ ລູກສາວອີກຫລາຍຄົນ.

15 ແລະ ລູກຫລານມະນຸດໄດ້ມີຈຳນວນຢ່າງຫລວງຫລາຍຢູ່ທົ່ວພື້ນແຜ່ນດິນ. ແລະ ໃນວັນເວລານັ້ນ ຊາຕານໄດ້ [ກ]ມີອຳນາດຢ່າງຫລວງຫລາຍໃນບັນດາມະນຸດ, ແລະ ລຸກລາມຢູ່ໃນໃຈຂອງພວກເຂົາ; ແລະ ນັບແຕ່ນັ້ນເປັນຕົ້ນມາຈຶ່ງມີການເຮັດສົງຄາມ ແລະ ການນອງເລືອດ; ແລະ ມືຂອງຄົນໆໜຶ່ງໄດ້ຕໍ່ສູ້ອ້າຍນ້ອງຂອງຕົນເອງ, ໃນການເຮັດການຄາດຕະກຳ, ເພາະວຽກງານ [ຂ]ລັບ, ໂດຍການສະແຫວງຫາອຳນາດ.

16 ວັນເວລາທັງໝົດຂອງເຊດຄືເກົ້າຮ້ອຍສິບສອງປີ, ແລະ ລາວໄດ້ຕາຍໄປ.

17 ແລະ ເມື່ອເອໂນດມີອາຍຸໄດ້ເກົ້າສິບປີ, ລາວໄດ້ [ກ]ເກນານ. ແລະ ເອໂນດ ແລະ ຄົນທີ່ເຫລືອຢູ່ຂອງພຣະເຈົ້າໄດ້ອອກມາຈາກແຜ່ນດິນ, ຊຶ່ງເອີ້ນວ່າ ຊູລອນ, ແລະ ໄດ້ໄປອາໄສໃນແຜ່ນດິນແຫ່ງຄຳສັນຍາ, ຊຶ່ງລາວໄດ້ເອີ້ນຕາມຊື່ຂອງລູກຊາຍຂອງລາວ, ຜູ້ລາວໄດ້ຕັ້ງຊື່ໃຫ້ວ່າເກນານ.

18 ແລະ ເອໂນດໄດ້ມີຊີວິດຢູ່ຕື່ມອີກ, ຫລັງຈາກລາວໄດ້ເກນານ, ແປດຮ້ອຍສິບຫ້າປີ, ແລະ ໄດ້ມີລູກຊາຍ ແລະ ລູກສາວອີກຫລາຍຄົນ. ແລະ ວັນເວລາທັງໝົດຂອງເອໂນດຄືເກົ້າຮ້ອຍຫ້າປີ, ແລະ ລາວໄດ້ຕາຍໄປ.

19 ແລະ ເມື່ອເກນານມີອາຍຸໄດ້ເຈັດສິບປີ, ລາວໄດ້ມະຫາລາເລນ; ແລະ ເກນານໄດ້ມີຊີວິດຕື່ມອີກ, ຫລັງຈາກລາວໄດ້ມະຫາລາເລນ, ແປດຮ້ອຍສີ່ສິບປີ, ແລະ ໄດ້ມີລູກຊາຍ ແລະ ລູກສາວອີກຫລາຍຄົນ. ແລະ ວັນເວລາທັງໝົດຂອງເກນານຄືເກົ້າຮ້ອຍສິບປີ, ແລະ ລາວໄດ້ຕາຍໄປ.

20 ແລະ ເມື່ອມະຫາລາເລນມີອາຍຸໄດ້ຫົກສິບຫ້າປີ, ລາວໄດ້ຢາເຣັດ; ແລະ ມະຫາລາເລນໄດ້ມີຊີວິດຕື່ມອີກ, ຫລັງຈາກລາວໄດ້ຢາເຣັດ, ແປດຮ້ອຍສາມສິບປີ, ແລະ ໄດ້ມີລູກຊາຍ ແລະ ລູກສາວອີກຫລາຍຄົນ. ແລະ ວັນເວລາທັງໝົດຂອງມະຫາລາເລນຄືແປດຮ້ອຍເກົ້າສິບຫ້າປີ, ແລະ ລາວໄດ້ຕາຍໄປ.

21 ແລະ ເມື່ອຢາເຣັດມີອາຍຸໄດ້ໜຶ່ງຮ້ອຍຫົກສິບສອງປີ, ລາວໄດ້ [ກ]ເອນົກ; ແລະ ຢາເຣັດໄດ້ມີຊີວິດຕື່ມອີກ, ຫລັງຈາກລາວໄດ້ເອນົກ, ແປດຮ້ອຍປີ, ແລະ ໄດ້ມີລູກຊາຍ ແລະ ລູກສາວອີກຫລາຍຄົນ. ແລະ ຢາເຣັດໄດ້ສິດສອນເອນົກໃນວິທີທາງຂອງພຣະເຈົ້າ.

22 ແລະ ນີ້ຄືລຳດັບການສືບເຊື້ອສາຍຂອງພວກລູກຊາຍຂອງອາດາມ, ຜູ້ເປັນ [ກ]ບູດຂອງພຣະເຈົ້າ, ຊຶ່ງພຣະເຈົ້າພຣະອົງເອງ, ໄດ້ສົນທະນານຳ.

23 ແລະ ພວກເຂົາເປັນ [ກ]ຜູ້ສັ່ງສອນຄວາມຊອບທຳ, ແລະ ໄດ້ກ່າວ ແລະ ໄດ້ [ຂ]ທຳນາຍ, ແລະ ໄດ້ເອີ້ນມະນຸດທຸກຄົນ, ຢູ່ທົ່ວທຸກບ່ອນ, ໃຫ້ [ຄ]ກັບໃຈ; ແລະ [ງ]ສັດທາໄດ້ຖືກສິດສອນໃຫ້ແກ່ລູກຫລານມະນຸດ.

15 *ກ* ມຊ 5:13.
*ຂ* ຄມພ ການມົ້ວສຸມລັບ.
17 *ກ* ປຖກ 5:10–14; ຄພ 107:45, 53.
21 *ກ* ປຖກ 5:18–24; ມຊ 7:69; 8:1–2. ຄມພ ເອນົກ.
22 *ກ* ລກ 3:38.
23 *ກ* ຄມພ ສາດສະດາ.
*ຂ* ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.
*ຄ* ຄມພ ກັບໃຈ, ການກັບໃຈ.
*ງ* ຄມພ ສັດທາ.

24 ແລະ ເຫດການໄດ້ບັງເກີດຂຶ້ນຄື ວັນ
ເວລາທັງໝົດຂອງຢາເຣັດຄືເກົ້າຮ້ອຍຫົກ
ສິບສອງປີ, ແລະ ລາວໄດ້ຕາຍໄປ.
25 ແລະ ເມື່ອເອນົກມີອາຍຸໄດ້ຫົກສິບຫ້າ
ປີ, ລາວໄດ້ [ກ]ເມທູເຊລາ.
26 ແລະ ເຫດ ການ ໄດ້ບັງ ເກີດ ຂຶ້ນ ຄື
ເອນົກໄດ້ເດີນທາງໄປໃນແຜ່ນດິນ, ໃນບັນ
ດາຜູ້ຄົນ; ແລະ ໃນຂະນະທີ່ລາວເດີນທາງ
ໄປຢູ່ນັ້ນ, ພຣະວິນຍານຂອງພຣະເຈົ້າໄດ້
ສະເດັດລົງມາຈາກສະຫວັນ, ແລະ ໄດ້ສະ
ຖິດຢູ່ກັບລາວ.
27 ແ ລະ ລາວ ໄດ້ ຍິນ ສຸ ລະ ສຽງ ຈາກ
ສະຫວັນ, ກ່າວວ່າ: ເອນົກ, ບຸດຂອງເຮົາ,
ຈົ່ງທຳນາຍແກ່ຜູ້ຄົນພວກນີ້, ແລະ ກ່າວກັບ
ພວກເຂົາວ່າ—ຈົ່ງກັບໃຈ, ເພາະພຣະຜູ້
ເປັນເຈົ້າໄດ້ກ່າວດັ່ງນີ້: ເຮົາ [ກ]ຄຽດແຄ້ນໃຫ້
ຜູ້ຄົນພວກນີ້, ແລະ ຄວາມຄຽດແຄ້ນອັນ
ຮຸນແຮງຂອງເຮົາເກີດກັບພວກເຂົາ; ເພາະ
ວ່າໃຈຂອງພວກເຂົາແຂງກະດ້າງ, ແລະ
[ຂ]ຫູຂອງພວກເຂົາດັບຕໍ່ການໄດ້ຍິນ, ແລະ
ຕາຂອງພວກເຂົາຫລຽວເຫັນໄດ້ [ຄ]ບໍ່ໄກ;
28 ແລະ ສຳລັບຫລາຍລຸ້ນມານີ້, ແມ່ນ
ແຕ່ນັບຕັ້ງແຕ່ວັນທີ່ເຮົາໄດ້ສ້າງພວກເຂົາ,
ພວກເຂົາໄດ້ [ກ]ຫລົງທາງໄປ, ແລະ ໄດ້
ປະຕິເສດເຮົາ, ແລະ ໄດ້ສະແຫວງຫາຄຳ
ແນະນຳຂອງເຂົາເອງໃນຄວາມມືດ; ແລະ
ໃນຄວາມໜ້າຊິງຊັງຂອງພວກເຂົາເອງ
ພວກເຂົາໄດ້ວາງແຜນການຄາດຕະກຳ,
ແລະ ບໍ່ໄດ້ຮັກສາພຣະບັນຍັດ, ຊຶ່ງເຮົາໄດ້
ມອບໃຫ້ແກ່ອາດາມ, ບິດາຂອງພວກເຂົາ.
29 ດັ່ງນັ້ນ, ພວກເຂົາຈຶ່ງໄດ້ສາບານເທັດ
ກັບຕົນເອງ, ແລະ ໂດຍ [ກ]ຄຳສາບານຂອງ
ພວກເຂົາເອງ, ພວກເຂົາໄດ້ນຳຄວາມຕາຍ
ມາສູ່ຕົນເອງ; ແລະ [ຂ]ນະລົກທີ່ເຮົາໄດ້ຈັດ
ຕຽມໄວ້ໃຫ້ພວກເຂົາ, ຖ້າຫາກພວກເຂົາບໍ່
ກັບໃຈ;
30 ແລະ ນີ້ຄືຄຳສັ່ງ, ຊຶ່ງເຮົາໄດ້ສົ່ງອອກ
ໄປນັບຕັ້ງແຕ່ການເລີ່ມຕົ້ນຂອງໂລກ, ຈາກ
ປາກຂອງເຮົາເອງ, ຕັ້ງແຕ່ການວາງຮາກ
ຖານຂອງໂລກ, ແລະ ໂດຍປາກຂອງຜູ້ຮັບ
ໃຊ້ຂອງເຮົາ, ບິດາຂອງເຈົ້າ, ເຮົາໄດ້ອອກ
ຄຳສັ່ງ, ແມ່ນແຕ່ດັ່ງທີ່ຈະສົ່ງມັນອອກໄປ
ໃນໂລກ, ຈົນເຖິງບ່ອນໄກສຸດຂອງມັນ.
31 ແລະ ເມື່ອ ເອນົກ ໄດ້ ຍິນຖ້ອຍຄຳ
ເຫລົ່ານີ້ແລ້ວ, ລາວໄດ້ກົ້ມຂາບລົງຢູ່ກັບ
ພື້ນດິນ, ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ,
ແລະ ໄດ້ທູນຕໍ່ພຣະຜູ້ເປັນເຈົ້າ, ໂດຍກ່າວ
ວ່າ: ເປັນດ້ວຍເຫດໃດຂ້າພຣະອົງຈຶ່ງໄດ້
ຮັບຄວາມໂປດປານໃນສາຍພຣະເນດ
ຂອງພຣະອົງ, ແລະ ຂ້າພຣະອົງເປັນພຽງ
ຄົນໜຸ່ມ, ແລະ ທຸກຄົນກຽດຊັງຂ້າພຣະອົງ;
ເພາະວ່າຂ້າພຣະອົງ [ກ]ເວົ້າຜ່ຳ; ດັ່ງນັ້ນເປັນ
ໄດ້ຈັ່ງໃດທີ່ຂ້າພຣະອົງໄດ້ເປັນຜູ້ຮັບໃຊ້
ຂອງພຣະອົງ?
32 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອນົກວ່າ: ຈົ່ງອອກໄປ ແລະ ເຮັດດັ່ງທີ່
ເຮົາບັນຊາເຈົ້າ, ແລະ ບໍ່ມີມະນຸດຄົນໃດ
ຈະສຽບແທງເຈົ້າ. ຈົ່ງເປີດ [ກ]ປາກຂອງເຈົ້າ,
ແລະ ມັນຈະຖືກເຮັດໃຫ້ເຕັມ, ແລະ ເຮົາ
ຈະໃຫ້ເຈົ້າເອີ່ຍປາກ, ເພາະວ່າເນື້ອໜັງທັງ
ປວງຢູ່ໃນມືຂອງເຮົາ, ແລະ ເຮົາຈະເຮັດ
ຕາມທີ່ເຮົາເຫັນວ່າດີ.

25ກ ຄມພ ເມທູເຊລາ.
27ກ ຄພ 63:32.
ຂ ມທ 13:15; 2 ນຟ 9:31; ມຊຍ 26:28; ຄພ 1:2, 11, 14.
ຄ ແອວ 10:25; 14:6.
28ກ ຄມພ ກະບົດ, ການກະບົດ.
29ກ ຄມພ ຄຳສາບານ.
ຂ ຄມພ ນະລົກ.
31ກ ອພຍ 4:10–16; ຢມຢ 1:6–9.
32ກ ຄພ 24:5–6; 60:2.

33 ຈົ່ງກ່າວ ກັບຜູ້ຄົນພວກນີ້ວ່າ: ພວກ
ທ່ານຈົ່ງ [ກ]ເລືອກໃນມື້ນີ້, ທີ່ຈະຮັບໃຊ້ອົງ
ພຣະຜູ້ເປັນເຈົ້າ ຜູ້ໄດ້ສ້າງພວກທ່ານ.
34 ຈົ່ງເບິ່ງ ພຣະວິນຍານຂອງເຮົາຢູ່ກັບ
ເຈົ້າ, ດັ່ງນັ້ນ ຖ້ອຍຄຳຂອງເຈົ້າທັງໝົດເຮົາ
ຈະຮັບຮອງ; ແລະ [ກ]ພູເຂົາຈະຫລົບໜີໄປ
ຕໍ່ໜ້າເຈົ້າ, ແລະ [ຂ]ແມ່ນ້ຳຈະໄຫລຫັນໜີ
ຈາກເສັ້ນທາງຂອງມັນ; ແລະ ເຈົ້າຈະສະ
ໜິດຢູ່ໃນເຮົາ, ແລະ ເຮົາຈະແນບສະໜິດ
ຢູ່ໃນເຈົ້າ; ສະນັ້ນຈົ່ງ [ຄ]ເດີນໄປກັບເຮົາ.
35 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອນົກວ່າ: ໃຫ້ເອົາຂີ້ຕົມເຈີມໃສ່ຕາຂອງ
ເຈົ້າ, ແລະ ລ້າງມັນ, ແລ້ວເຈົ້າຈະເຫັນ.
ແລະ ລາວກໍໄດ້ເຮັດຕາມນັ້ນ.
36 ແລະ ລາວໄດ້ເຫັນ [ກ]ວິນຍານທີ່ພຣະ
ເຈົ້າໄດ້ສ້າງ; ແລະ ລາວໄດ້ເຫັນສິ່ງທີ່ຕາ
[ຂ]ທຳມະດາບໍ່ສາມາດຫລຽວເຫັນນຳອີກ;
ແລະ ນັບແຕ່ນັ້ນເປັນຕົ້ນມາມີຂ່າວເລົ່າລື
ໄປທົ່ວແຜ່ນດິນວ່າ: ພຣະຜູ້ເປັນເຈົ້າໄດ້ຍົກ
[ຄ]ພະຍາກອນຜູ້ໜຶ່ງຂຶ້ນໃຫ້ແກ່ຜູ້ຄົນຂອງ
ພຣະອົງ.
37 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເອນົກໄດ້ອອກໄປໃນແຜ່ນດິນ, ໃນບັນດາ
ຜູ້ຄົນ, ໂດຍຢືນຢູ່ເທິງໂນນພູ ແລະ ບ່ອນ
ສູງ, ແລະ ໄດ້ເປັ່ງສຽງອັນດັງ, ເປັນພະຍານ
ຕໍ່ຕ້ານວຽກງານຂອງພວກເຂົາ; ແລະ ທຸກ
ຄົນ [ກ]ບໍ່ພໍໃຈກັບລາວ.
38 ແລະ ພວກເຂົາໄດ້ມາຟັງລາວ, ຢູ່ເທິງ
ບ່ອນສູງ, ໂດຍກ່າວກັບຜູ້ດູແລຜ້າເຕັ້ນວ່າ:
ໃຫ້ພວກເຈົ້າຢູ່ນີ້ ແລະ ດູແລຜ້າເຕັ້ນ, ໃນ
ຂະນະທີ່ພວກເຮົາໄປພຸ້ນເພື່ອເບິ່ງຜູ້ພະຍາ
ກອນ, ເພາະວ່າລາວໄດ້ທຳນາຍ, ແລະ ມີ
ສິ່ງແປກປະຫລາດໃນແຜ່ນດິນ; ຄົນປ່າຄົນ
ໜຶ່ງໄດ້ມາໃນບັນດາພວກເຮົາ.
39 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອ
ພວກເຂົາໄດ້ຍິນລາວ, ບໍ່ມີມະນຸດຄົນໃດ
ວາງມືໃສ່ລາວ; ເພາະວ່າທຸກຄົນທີ່ໄດ້ຍິນ
ລາວມີຄວາມຢ້ານກົວ; ເພາະວ່າລາວໄດ້
ເດີນໄປກັບພຣະເຈົ້າ.
40 ແລະ ມີຊາຍຄົນໜຶ່ງໄດ້ມາຫາລາວ,
ຊຶ່ງຊື່ວ່າ ມາຮີຢາ, ແລະ ໄດ້ກ່າວກັບລາວ:
ຈົ່ງບອກພວກເຮົາຢ່າງແຈ່ມແຈ້ງວ່າທ່ານ
ເປັນໃຜ, ແລະ ທ່ານມາຈາກໃສ?
41 ແລະ ລາວ ໄດ້ກ່າວກັບພວກເຂົາ
ວ່າ: ຂ້າພະເຈົ້າມາຈາກແຜ່ນດິນເກນານ,
ແຜ່ນດິນຂອງບັນພະບຸລຸດຂອງຂ້າພະເຈົ້າ,
ແຜ່ນດິນແຫ່ງຄວາມຊອບທຳຈົນເຖິງທຸກ
ວັນນີ້. ແລະ ບິດາຂອງຂ້າພະເຈົ້າໄດ້ສິດ
ສອນຂ້າພະເຈົ້າໃນວິທີທາງທັງໝົດຂອງ
ພຣະເຈົ້າ.
42 ແລະ ເຫດການໄດ້ບັງເກີດຂຶ້ນຄື, ໃນ
ຂະນະທີ່ຂ້າພະເຈົ້າເດີນທາງຈາກແຜ່ນດິນ
ເກນານ, ໃກ້ທະເລທາງຕາເວັນອອກ, ຂ້າ
ພະເຈົ້າໄດ້ເຫັນພາບນິມິດ; ແລະ ເບິ່ງແມ,
ຂ້າພະເຈົ້າໄດ້ເຫັນສະຫວັນ, ແລະ ພຣະຜູ້
ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າ, ແລະ ໄດ້
ປະທານພຣະບັນຍັດໃຫ້ຂ້າພະເຈົ້າ; ດັ່ງ
ນັ້ນ, ເພາະດ້ວຍເຫດນີ້, ເພື່ອຮັກສາພຣະ
ບັນຍັດ, ຂ້າພະເຈົ້າຈຶ່ງໄດ້ກ່າວຖ້ອຍຄຳ
ເຫລົ່ານີ້.
43 ແລະ ເອນົກ ໄດ້ກ່າວປາໄສຕໍ່ໄປ,
ໂດຍກ່າວວ່າ: ພຣະຜູ້ເປັນເຈົ້າຜູ້ຊຶ່ງໄດ້
ກ່າວກັບຂ້າພະເຈົ້າ, ອົງດຽວກັນນີ້ເປັນ
ພຣະເຈົ້າແຫ່ງສະຫວັນ, ແລະ ພຣະອົງ

33 *ກ* ຄມພ ອຳເພີໃຈ.
34 *ກ* ມທ 17:20.
*ຂ* ມຊ 7:13.
*ຄ* ປຖກ 5:24;
ມຊ 7:69.
ຄມພ ເດີນ, ເດີນໄປ ກັບພຣະເຈົ້າ.
36 *ກ* ຄມພ ການສ້າງວິນຍານ.
*ຂ* ມຊ 1:11.
*ຄ* ຄມພ ຜູ້ພະຍາກອນ.
37 *ກ* 1 ນຟ 16:1–3.

ເປັນພຣະເຈົ້າຂອງຂ້າພະເຈົ້າ, ແລະ ພຣະ
ເຈົ້າຂອງພວກທ່ານ, ແລະ ພວກທ່ານເປັນ
ອ້າຍນ້ອງຂອງຂ້າພະເຈົ້າ, ແລະ ເປັນຫຍັງ
ຈຶ່ງ [ກ]ແນະນຳຕົນເອງ, ແລະ ປະຕິເສດພຣະ
ເຈົ້າແຫ່ງສະຫວັນ?
44 ພຣະອົງໄດ້ສ້າງສະຫວັນ; [ກ]ແຜ່ນດິນ
ໂລກເປັນ [ຂ]ບ່ອນຮອງພຣະບາດຂອງພຣະ
ອົງ; ແລະ ຮາກຖານຂອງມັນເປັນຂອງ
ພຣະອົງ. ຈົ່ງເບິ່ງ, ພຣະອົງໄດ້ສ້າງມັນ,
ພຣະອົງໄດ້ນຳໄພ່ພົນມະນຸດມາຢູ່ເທິງພື້ນ
ມັນ.
45 ແລະ ຄວາມຕາຍໄດ້ມາເຖິງບັນພະ
ບຸລຸດຂອງພວກເຮົາ; ເຖິງຢ່າງໃດກໍຕາມ
ພວກເຮົາຍັງຮູ້ພວກເພິ່ນ, ແລະ ບໍ່ສາມາດ
ປະຕິເສດ, ແລະ ແມ່ນແຕ່ຄົນທຳອິດຂອງ
ທັງໝົດພວກເຮົາກໍຮູ້ຈັກ, ແມ່ນແຕ່ອາດາມ.
46 ເພາະວ່າປຶ້ມແຫ່ງ [ກ]ຄວາມຊົງຈຳ
ພວກເຮົາໄດ້ຂຽນໃນບັນດາພວກເຮົາ,
ອີງຕາມແບບແຜນທີ່ມອບໃຫ້ໂດຍນິ້ວ
ພຣະຫັດຂອງພຣະເຈົ້າ; ແລະ ມັນໄດ້ຖືກ
ປະທານໃຫ້ໃນພາສາຂອງພວກເຮົາເອງ.
47 ແລະ ໃນຂະນະທີ່ເອນົກໄດ້ກ່າວ
ພຣະຄຳຂອງພຣະເຈົ້າອອກມາ, ຜູ້ຄົນໄດ້
ຕົວສັ່ນ, ແລະ ບໍ່ສາມາດຢືນຢູ່ຕໍ່ໜ້າລາວ.
48 ແລະ ລາວໄດ້ກ່າວກັບພວກເຂົາວ່າ:
ເພາະວ່າອາດາມ [ກ]ຕົກ, ພວກເຮົາຈຶ່ງເປັນ
ຢູ່; ແລະ ໂດຍການຕົກຂອງເພິ່ນ [ຂ]ຄວາມ
ຕາຍຈຶ່ງໄດ້ມາເຖິງ; ແລະ ພວກເຮົາຖືກກຳ
ນົດໃຫ້ເປັນຜູ້ມີສ່ວນໃນຄວາມທຸກທໍລະ
ມານ ແລະ ວິບັດ.
49 ຈົ່ງເບິ່ງ ຊາຕານໄດ້ມາໃນບັນດາລູກ
ຫລານມະນຸດ, ແລະ [ກ]ລໍ້ລວງພວກເຂົາໃຫ້
ນະມັດສະການມັນ; ແລະ ມະນຸດກາຍເປັນ
ຄົນມີ [ຂ]ກາມມະລົມ, [ຄ]ຕັນຫາໜ້າມືດ, ແລະ
ຕ່ຳຊ້າ, ແລະ ຖືກ [ງ]ກີດກັນໄວ້ຈາກທີ່ປະທັບ
ຂອງພຣະເຈົ້າ.
50 ແຕ່ພຣະເຈົ້າໄດ້ເຮັດໃຫ້ເປັນທີ່ຮູ້ຈັກ
ແກ່ບັນພະບຸລຸດຂອງພວກເຮົາແລ້ວວ່າ
ມະນຸດທັງປວງຕ້ອງກັບໃຈ.
51 ແລະ ພຣະອົງໄດ້ເອີ້ນພໍ່ອາດາມຂອງ
ພວກເຮົາໂດຍສຸລະສຽງຂອງພຣະອົງເອງ,
ໂດຍກ່າວວ່າ: ເຮົາຄື ພຣະເຈົ້າ; ເຮົາໄດ້
ສ້າງໂລກ, ແລະ [ກ]ມະນຸດ [ຂ]ກ່ອນພວກເຂົາ
ເປັນຢູ່ໃນເນື້ອໜັງ.
52 ແລະ ພຣະອົງໄດ້ກ່າວກັບເພິ່ນອີກ
ວ່າ: ຖ້າຫາກເຈົ້າຈະຫັນມາຫາເຮົາ, ແລະ
ເຊື່ອຟັງສຽງຂອງເຮົາ, ແລະ ເຊື່ອ, ແລະ ກັບ
ໃຈຈາກການລ່ວງລະເມີດທັງປວງຂອງເຈົ້າ,
ແລະ ຮັບ [ກ]ບັບຕິສະມາ, ແມ່ນແຕ່ໃນນ້ຳ, ໃນ
ພຣະນາມຂອງພຣະບຸດອົງດຽວທີ່ຖືກກຳເນີດ
ຂອງເຮົາ, ຜູ້ເຕັມໄປດ້ວຍ [ຂ]ພຣະຄຸນ ແລະ
ຄວາມຈິງ, ຊຶ່ງຄື [ຄ]ພຣະເຢຊູຄຣິດ, [ງ]ພຣະ
ນາມດຽວເທົ່ານັ້ນ ຊຶ່ງຈະມອບໃຫ້ພາຍໃຕ້
ຟ້າສະຫວັນ, ຊຶ່ງໂດຍພຣະນາມນັ້ນ [ຈ]ຄວາມ
ລອດຈະມາເຖິງລູກຫລານມະນຸດ, ເຈົ້າຈະ
ໄດ້ຮັບຂອງປະທານແຫ່ງພຣະວິນຍານບໍລິ

---

43 ກ ສພສ 1:24–33; ຄພ 56:14–15.
44 ກ ພບຍ 10:14.
ຂ ອຣຣ 2:7.
46 ກ ຄມພ ປຶ້ມແຫ່ງຄວາມຊົງຈຳ.
48 ກ 2 ນຟ 2:25. ຄມພ ການຕົກຂອງ ອາດາມ ແລະ ເອວາ.
ຂ ຄມພ ຄວາມຕາຍ ທາງຮ່າງກາຍ.
49 ກ ມຊ 1:12. ຄມພ ລໍ້ລວງ, ການລໍ້ລວງ.
ຂ ມຊຢ 16:3–4; ມຊ 5:13. ຄມພ ກາມມະລົມ.
ຄ ຄມພ ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ.
ງ ຄມພ ຄວາມຕາຍ ທາງວິນຍານ.
51 ກ ຄມພ ມະນຸດ—ມະນຸດ, ລູກທາງວິນຍານຂອງ ພຣະບິດາເທິງສະຫວັນ.
ຂ ຄມພ ການສ້າງວິນຍານ.
52 ກ 3 ນຟ 11:23–26. ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
ຂ ຄມພ ພຣະຄຸນ.
ຄ ຄມພ ພຣະເຢຊູຄຣິດ.
ງ ກຈກ 4:12; 2 ນຟ 31:21.
ຈ ຄມພ ລອດ, ຄວາມລອດ.

ສຸດ, ໂດຍຂໍທຸກສິ່ງໃນພຣະນາມຂອງພຣະ
ອົງ, ແລະ ສິ່ງໃດກໍຕາມທີ່ເຈົ້າຈະຂໍ, ມັນຈະ
ຖືກມອບໃຫ້ແກ່ເຈົ້າ.
53 ແລະ ພໍ່ອາດາມຂອງພວກເຮົາໄດ້
ກ່າວກັບພຣະຜູ້ເປັນເຈົ້າວ່າ: ເປັນຫຍັງ
ມະນຸດຈຶ່ງຕ້ອງກັບໃຈ ແລະ ຮັບບັບຕິ
ສະມາໃນນ້ຳ? ແລະ ພຣະຜູ້ເປັນເຈົ້າໄດ້
ກ່າວກັບອາດາມວ່າ: ຈົ່ງເບິ່ງ ເຮົາໄດ້ [ກ]ໃຫ້
ອະໄພແກ່ເຈົ້າ ສຳລັບການລ່ວງລະເມີດ
ຂອງເຈົ້າຢູ່ໃນສວນເອເດນ.
54 ຈາກທີ່ກ່າວມານັ້ນໄດ້ມີຂ່າວເລົ່າລື
ໄປທົ່ວໃນບັນດາຜູ້ຄົນ, ວ່າ [ກ]ພຣະບຸດຂອງ
ພຣະເຈົ້າໄດ້ [ຂ]ຊົດໃຊ້ແທນຄວາມຜິດບາບ
ດັ້ງເດີມ, ຊຶ່ງໃນການນີ້ບາບຂອງພໍ່ແມ່ຈະ
ບໍ່ຕົກລົງເທິງຫົວຂອງ [ຄ]ລູກໆ, ເພາະພວກ
ເຂົາປາດສະຈາກບາບຈາກການວາງຮາກ
ຖານຂອງໂລກ.
55 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ອາດາມວ່າ: ຕາບໃດທີ່ລູກໆຂອງເຈົ້າໄດ້
ເກີດໃນບາບສັນໃດ, ແມ່ນເມື່ອພວກເຂົາ
ເລີ່ມເຕີບໂຕຂຶ້ນ, [ກ]ບາບຍ່ອມເກີດຂຶ້ນໃນ
ໃຈຂອງພວກເຂົາສັນນັ້ນ, ແລະ ພວກເຂົາ
ຈະໄດ້ຊີມລົດຊາດອັນ [ຂ]ຂົມຂື່ນ, ເພື່ອວ່າ
ພວກເຂົາຈະຮູ້ຈັກໃຫ້ຄຸນຄ່າແກ່ຄວາມດີ.
56 ແລະ ມັນໄດ້ຖືກມອບໃຫ້ແກ່ພວກ
ເຂົາເພື່ອຈະໄດ້ຮູ້ຄວາມດີຈາກຄວາມຊົ່ວ;
ດັ່ງນັ້ນ ພວກເຂົາຈຶ່ງ [ກ]ເປັນຕົວແທນອິດສະ
ລະພາບຂອງຕົນເອງ, ແລະ ເຮົາໄດ້ມອບ
ກົດ ແລະ ບັນຍັດອີກຂໍ້ໜຶ່ງໃຫ້ແກ່ເຈົ້າ.
57 ດັ່ງນັ້ນ ຈົ່ງສິດສອນລູກໆຂອງເຈົ້າ,
ວ່າມະນຸດທຸກຄົນ, ໃນທຸກແຫ່ງຫົນ, ຈະ
ຕ້ອງ [ກ]ກັບໃຈ, ຖ້າບໍ່ດັ່ງນັ້ນ ພວກເຂົາຈະບໍ່
ມີທາງສາມາດໄດ້ຮັບອານາຈັກຂອງພຣະ
ເຈົ້າເປັນມູນມໍລະດົກ, ເພາະວ່າ [ຂ]ສິ່ງທີ່ບໍ່
ສະອາດຈະບໍ່ສາມາດ [ຄ]ຢູ່ໃນທີ່ນັ້ນ, ຫລື ຢູ່
ໃນທີ່ປະທັບຂອງພຣະອົງ; ເພາະວ່າ, ໃນ
ພາສາຂອງອາດາມ, [ງ]ພຣະຜູ້ບໍລິສຸດຄື
ພຣະນາມຂອງພຣະອົງ, ແລະ ພຣະນາມ
ຂອງພຣະອົງດຽວທີ່ຖືກກຳເນີດຂອງພຣະອົງ
ຄື [ຈ]ບຸດມະນຸດ, ແມ່ນແຕ່ ພຣະເຢຊູຄຣິດ,
[ສ]ຜູ້ພິພາກສາທີ່ຊອບທຳ, ຜູ້ຈະສະເດັດມາ
ໃນເວລາອັນຮຸ່ງໂລດ.
58 ສະນັ້ນ ເຮົາຈຶ່ງມອບບັນຍັດຂໍ້ໜຶ່ງໃຫ້
ແກ່ເຈົ້າ, ເພື່ອສິດສອນສິ່ງເຫລົ່ານີ້ຢ່າງເປັນ
ອິດສະລະກັບ [ກ]ລູກໆຂອງເຈົ້າ, ໂດຍກ່າວ
ວ່າ:
59 ຄື ໂດຍເຫດຜົນຂອງການລ່ວງ
ລະເມີດ ການຕົກຈຶ່ງມີມາ, ຊຶ່ງການຕົກໄດ້
ນຳຄວາມຕາຍມາໃຫ້, ແລະ ຕາບໃດທີ່
ພວກເຈົ້າໄດ້ເກີດໃນໂລກໂດຍນ້ຳ, ແລະ
ໂລຫິດ, ແລະ [ກ]ວິນຍານ, ຊຶ່ງເຮົາໄດ້ສ້າງ,
ແລະ ຈາກ [ຂ]ດິນໄດ້ກາຍເປັນຈິດວິນຍານ
ທີ່ມີຊີວິດສັນໃດ, ແມ່ນແຕ່ສັນນັ້ນພວກເຈົ້າ
ຈະຕ້ອງໄດ້ [ຄ]ເກີດໃໝ່ອີກເຂົ້າໃນອານາຈັກ

53 *ກ* ຄມພ ອະໄພ, ໃຫ້ອະໄພ.
54 *ກ* ຄມພ ພຣະເຢຊູຄຣິດ.
*ຂ* ຄມພ ຊົດໃຊ້, ການຊົດໃຊ້.
*ຄ* ມຊຢ 3:16.
55 *ກ* ຄມພ ບາບ.
*ຂ* ຄພ 29:39. ຄມພ ຍາກລຳບາກ, ຄວາມຍາກລຳບາກ.
56 *ກ* 2 ນຟ 2:26–27; ຮລມ 14:29–30. ຄມພ ອຳເພີໃຈ.
57 *ກ* 1 ກຣທ 6:9–10. ຄມພ ກັບໃຈ, ການກັບໃຈ.
*ຂ* 1 ນຟ 10:21. ຄມພ ສະອາດ ແລະ ບໍ່ສະອາດ.
*ຄ* ພສສ 24:3–4; 1 ນຟ 15:33–36; ມມ 7:7; ຄພ 76:50–62.
*ງ* ມຊ 7:35. ຄມພ ພຣະຜູ້ບໍລິສຸດ.
*ຈ* ຄມພ ບຸດມະນຸດ.
*ສ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ; ພຣະເຢຊູຄຣິດ—ພິພາກສາ.
58 *ກ* ຄມພ ເດັກ, ເດັກນ້ອຍ.
59 *ກ* 1 ຢຮ 5:8.
*ຂ* ປຖກ 2:7; ມຊ 4:25; ອຣຮ 5:7.
*ຄ* ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.

ສະຫວັນ, ດ້ວຍ [ງ]ນ້ຳ, ແລະ ດ້ວຍວິນຍານ, ແລະ ສະອາດ ໂດຍ ໂລຫິດ, ແມ່ນແຕ່ ໂລຫິດຂອງພຣະອົງດຽວທີ່ຖືກກຳເນີດຂອງເຮົາ; ເພື່ອວ່າພວກເຈົ້າຈະໄດ້ຮັບການຊຳລະໃຫ້ບໍລິສຸດຈາກບາບທັງປວງ, ແລະ [ຈ]ຊື່ນຊົມກັບ [ສ]ຖ້ອຍຄຳແຫ່ງຊີວິດນິລັນດອນໃນໂລກນີ້, ແລະ ຊີວິດນິລັນດອນໃນໂລກທີ່ຈະມາເຖິງ, ແມ່ນແຕ່ [ຊ]ລັດສະໝີພາບທີ່ອະມະຕະ;

60 ເພາະວ່າໂດຍ [ກ]ນ້ຳພວກເຈົ້າຈະຮັກສາບັນ ຍັດ; ໂດຍພຣະວິນຍານພວກເຈົ້າຈະຖືກ [ຂ]ຮັບຮອງ, ແລະ ໂດຍ [ຄ]ໂລຫິດພວກເຈົ້າຈະໄດ້ຮັບ [ງ]ການຊຳລະໃຫ້ບໍລິສຸດ;

61 ສະນັ້ນ ມັນໄດ້ຖືກມອບໃຫ້ເພື່ອຈະຢູ່ໃນພວກເຈົ້າ; ພະຍານໃນສະຫວັນ; [ກ]ພຣະຜູ້ປອບໂຍນ; ສິ່ງທີ່ເປັນສັນຕິສຸກແຫ່ງລັດສະໝີພາບທີ່ອະມະຕະ; ຄວາມຈິງຂອງທຸກສິ່ງທັງປວງ; ສິ່ງທີ່ເຮັດໃຫ້ທຸກສິ່ງທັງປວງມີຊີວິດຊີວາ, ສິ່ງທີ່ໃຫ້ຊີວິດແກ່ທຸກສິ່ງທັງປວງ; ສິ່ງທີ່ຮູ້ທຸກສິ່ງທັງປວງ, ແລະ ມີອຳນາດທັງໝົດຕາມສະຕິປັນຍາ, ຄວາມເມດຕາ, ຄວາມຈິງ, ຄວາມຍຸດຕິທຳ, ແລະ ການພິພາກສາ.

62 ແລະ ບັດນີ້, ຈົ່ງເບິ່ງ, ເຮົາກ່າວກັບເຈົ້າວ່າ: ນີ້ຄື [ກ]ແຜນແຫ່ງຄວາມລອດເພື່ອມະນຸດທັງປວງ, ຜ່ານໂລຫິດຂອງ [ຂ]ພຣະອົງດຽວທີ່ຖືກກຳເນີດຂອງເຮົາ, ຜູ້ຈະສະເດັດມາໃນເວລາອັນຮຸ່ງໂລດ.

63 ແລະ ຈົ່ງເບິ່ງ, ທຸກສິ່ງທັງປວງມີລັກສະນະທີ່ເໝືອນກັນ, ແລະ ທຸກສິ່ງທັງປວງໄດ້ຖືກສ້າງຂຶ້ນມາ ແລະ ຖືກເຮັດເພື່ອໃຫ້ [ກ]ເປັນພະຍານເຖິງເຮົາ, ທັງສິ່ງທີ່ເປັນຝ່າຍໂລກ, ແລະ ສິ່ງທີ່ເປັນຝ່າຍວິນຍານ; ສິ່ງທີ່ຢູ່ໃນຟ້າສະຫວັນເບື້ອງເທິງ, ແລະ ສິ່ງທີ່ຢູ່ເທິງແຜ່ນດິນໂລກ, ແລະ ສິ່ງທີ່ຢູ່ໃນແຜ່ນດິນໂລກ, ແລະ ສິ່ງທີ່ຢູ່ໃຕ້ແຜ່ນດິນໂລກ, ທັງເບື້ອງເທິງ ແລະ ເບື້ອງລຸ່ມ: ທຸກສິ່ງທັງປວງເປັນພະຍານເຖິງເຮົາ.

64 ແລະ ເຫດການໄດ້ບັງເກີດຂຶ້ນຄື, ເມື່ອພຣະຜູ້ເປັນເຈົ້າໄດ້ກ່າວກັບອາດາມ, ບິດາຂອງພວກເຮົາແລ້ວ, ອາດາມໄດ້ທູນຕໍ່ພຣະຜູ້ເປັນເຈົ້າ, ແລະ ເພິ່ນໄດ້ຖືກພາໄປໂດຍ [ກ]ພຣະວິນຍານຂອງພຣະຜູ້ເປັນເຈົ້າ, ແລະ ໄດ້ຖືກນຳລົງໄປໃນ [ຂ]ນ້ຳ, ແລະ ຖືກວາງໄວ້ໃຕ້ນ້ຳ, ແລະ ຖືກນຳຂຶ້ນມາຈາກນ້ຳ.

65 ແລະ ເພິ່ນໄດ້ຮັບບັບຕິສະມາດັ່ງນັ້ນ, ແລະ ພຣະວິນຍານຂອງພຣະເຈົ້າໄດ້ສະເດັດມາເທິງເພິ່ນ, ແລະ ເພິ່ນໄດ້ [ກ]ເກີດທາງວິນຍານດັ່ງນັ້ນ, ແລະ ໄດ້ຖືກເຮັດໃຫ້ມີຊີວິດຊີວາຂຶ້ນໃນ [ຂ]ຈິດໃຈ.

66 ແລະ ເພິ່ນໄດ້ຍິນສຸລະສຽງອອກມາຈາກສະຫວັນ, ໂດຍກ່າວວ່າ: ເຈົ້າໄດ້ [ກ]ບັບຕິສະມາດ້ວຍໄຟ, ແລະ ດ້ວຍພຣະວິນຍານບໍລິສຸດ. ນີ້ຄື [ຂ]ພະຍານຂອງພຣະບິດາ, ແລະ ພຣະບຸດ, ນັບແຕ່ນີ້ເປັນຕົ້ນໄປ ແລະ ຕະຫລອດການ;

---

59 *ງ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຈ* 2 ນຟ 4:15–16; ແອວ 32:28.
*ສ* ຢຮ 6:68.
*ຊ* ຄມພ ລັດສະໝີພາບຂອງຊັ້ນສູງ.
60 *ກ* ມຣນ 8:25.
*ຂ* ຄມພ ຮັບຮອງ, ການຮັບຮອງ.
*ຄ* ຄມພ ເລືອດ, ໂລຫິດ.
*ງ* ຄມພ ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.
61 *ກ* ຄມພ ພຣະວິນຍານບໍລິສຸດ.
62 *ກ* ຄມພ ແຜນແຫ່ງການໄຖ່.
*ຂ* ຄມພ ອົງດຽວທີ່ຖືກກຳເນີດ.
63 *ກ* ແອວ 30:44; ຄພ 88:45–47.
64 *ກ* ຄມພ ພຣະວິນຍານບໍລິສຸດ.
*ຂ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
65 *ກ* ຄມພ ເກີດໃໝ່, ເກີດຈາກພຣະເຈົ້າ.
*ຂ* ມຊຢ 27:25; ແອວ 5:12–15.
66 *ກ* ຄພ 19:31. ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
*ຂ* 2 ນຟ 31:17–18; 3 ນຟ 28:11.

67 ແລະ ເຈົ້າ ເປັນ ຄົນ ຕາມ [ກ]ລະບຽບ
ຂອງ ພ ຣະ ອົງ ຜູ້ ປາດ ສະ ຈ າ ກ ກ າ ນ ເລີ່ມ
ຕົ້ນ ຂອງ ມື້ ຫລື ທີ່ ສິ້ນ ສຸດ ຂ ອງ ປີ, ຈາກ
ຕະຫລອດຊົ່ວນິລັນດອນ ເຖິງຕະຫລອດ
ຊົ່ວນິລັນດອນ.
68 ຈົ່ງເບິ່ງ, ເຈົ້າເປັນ [ກ]ໜຶ່ງໃນເຮົາ, ເປັນ
ບຸດ ຂອງ ພຣະ ເຈົ້າ; ແລະ ດັ່ງນັ້ນຄົນທັງ
ປວງຈະກາຍເປັນ [ຂ]ບຸດຂອງເຮົາ. ອາແມນ.

## ບົດທີ 7
## (ເດືອນທັນວາ 1830)

*ເອນົກສິດສອນ, ນຳພາຜູ້ຄົນ, ແລະ ເຄື່ອນ ຍ້າຍ ພູ ເຂົາ— ເມືອງຊີໂອນຖືກສະຖາ ປະນາຂຶ້ນ—ເອນົກຫລຽວເຫັນລ່ວງໜ້າເຖິງ ການສະເດັດມາຂອງບຸດມະນຸດ, ການເສຍ ສະລະຊີວິດໃຊ້ຂອງພຣະອົງ, ແລະ ການຟື້ນ ຄືນຊີວິດຂອງໄພ່ພົນຂອງພຣະເຈົ້າ—ເພິ່ນ ຫລຽວເຫັນລ່ວງໜ້າເຖິງການຟື້ນຟູ, ການ ເຕົ້າໂຮມ, ການສະເດັດມາຄັ້ງທີສອງ, ແລະ ການກັບຄືນຂອງຊີໂອນ.*

1 ແ ລ ະ ເຫດ ກ າ ນ ໄດ້ ບັງ ເກີດ ຂຶ້ນ ຄື
ເອນົກກ່າວປາໄສຂອງເພິ່ນຕໍ່ໄປ, ໂດຍ
ກ່າວວ່າ: ຈົ່ງເບິ່ງ, ອາດາມບິດາຂອງພວກ
ເຮົາໄດ້ສິດສອນສິ່ງເຫລົ່ານີ້, ແລະ ຫລາຍ
ຄົນໄດ້ເຊື່ອ ແລະ ກາຍເປັນ [ກ]ບຸດຂອງພຣະ
ເຈົ້າ, ແລະ ຫລາຍຄົນບໍ່ໄດ້ເຊື່ອ, ແລະ ໄດ້
ຕາຍ ໄປ ໃນ ຄວາມ ບາບ ຂອງ ພວກ ເຂົາ,
ແລະ ເຝົ້າຄອຍດ້ວຍ [ຂ]ຄວາມຢ້ານກົວ, ໃນ
ຄວາມທໍລະມານ, ເຖິງຄວາມເຄືອງແຄ້ນ
ເໝືອນກັບໄຟອັນໜ້າເກງຂາມ ແລະ ໜ້າ
ຢ້ານກົວຂອງພຣະເຈົ້າ ທີ່ຈະຖອກເທລົງ
ໃສ່ພວກເຂົາ.
2 ແລະ ນັບ ແຕ່ ເວລາ ນັ້ນ ມາ ເອນົກ ໄດ້
ເລີ່ມທຳນາຍ, ໂດຍກ່າວກັບຜູ້ຄົນວ່າ: ໃນ
ຂະນະທີ່ຂ້າພະເຈົ້າເດີນທາງ, ແລະ ຢືນ
ຢູ່ເທິງສະຖານທີ່ ເມຮູຢາ, ແລະ ໄດ້ທູນຕໍ່
ພຣະຜູ້ເປັນເຈົ້າ, ໄດ້ມີສຸລະສຽງອອກມາ
ຈາກສະຫວັນ, ໂດຍກ່າວວ່າ—ເຈົ້າຈົ່ງຫັນ
ກັບໄປ, ແລະ ເຈົ້າຈົ່ງຂຶ້ນໄປເທິງພູຊີເມ
ໂອນ.
3 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ກັບໄປ ແລະ ໄດ້ຂຶ້ນໄປເທິງພູ;
ແລະ ໃນຂະນະທີ່ຂ້າພະເຈົ້າຢືນຢູ່ເທິງພູ,
ຂ້າພະເຈົ້າໄດ້ເຫັນຟ້າສະຫວັນເປີດ, ແລະ
ຂ້າພະເຈົ້າໄດ້ຖືກຫຸ້ມຫໍ່ດ້ວຍ [ກ]ລັດສະໝີ
ພາບ;
4 ແລະ ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນ
ເຈົ້າ; ແລະ ພຣະອົງໄດ້ປະທັບຢູ່ຕໍ່ໜ້າຂອງ
ຂ້າພະເຈົ້າ, ແລະ ພຣະອົງໄດ້ເວົ້າລົມກັບ
ຂ້າພະເຈົ້າ, ແມ່ນແຕ່ຄືກັນກັບຄົນຜູ້ໜຶ່ງ
ເວົ້າກັບຄົນອີກຜູ້ໜຶ່ງ, [ກ]ໜ້າຕໍ່ໜ້າ; ແລະ
ພຣະອົງໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງ
[ຂ]ຫລຽວເບິ່ງ, ແລະ ເຮົາຈະສະແດງໃຫ້ເຈົ້າ
ເຫັນໂລກເປັນເວລາຫລາຍລຸ້ນຄົນ.
5 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າໄດ້ເຫັນທ່ອມພູຊຳ, ແລະ ເບິ່ງແມ,
ຜູ້ຄົນຢ່າງຫລວງຫລາຍທີ່ອາໄສຢູ່ໃນຜ້າ
ເຕັ້ນ, ຊຶ່ງເປັນຜູ້ຄົນຂອງຊຳ.
6 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າອີກ: ຈົ່ງເບິ່ງເຖີດ; ແລະ ຂ້າພະເຈົ້າ
ໄດ້ຫລຽວໄປທາງທິດເໜືອ, ແລະ ຂ້າພະ

---

67 *ກ* ຄມພ ຖານະປະໂລຫິດ ແຫ່ງເມນຄີເສເດັກ.
68 *ກ* 1 ຢຮ 3:1–3; ຄພ 35:2.
*ຂ* ຢຮ 1:12; ຄພ 34:3.
ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
7 1 *ກ* ຄມພ ບຸດ ແລະ ທິດາ ຂອງພຣະເຈົ້າ.
*ຂ* ແອວ 40:11–14.
3 *ກ* ຄມພ ການປ່ຽນສະພາບ.
4 *ກ* ປຖກ 32:30; ພບຍ 5:4; ມຊ 1:2, 11, 31.
*ຂ* ມຊ 1:4.

ເຈົ້າໄດ້ເຫັນຜູ້ຄົນຂອງການາອານ, ຊຶ່ງອາ
ໄສຢູ່ໃນຜ້າເຕັ້ນ.
7 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າວ່າ: ຈົ່ງທຳນາຍ; ແລະ ຂ້າພະເຈົ້າ
ໄດ້ທຳນາຍ, ໂດຍກ່າວວ່າ: ຈົ່ງເບິ່ງຜູ້ຄົນ
ຂອງການາອານ, ຊຶ່ງມີຈຳນວນຢ່າງຫລວງ
ຫລາຍ, ຈະອອກໄປຕໍ່ສູ້ກັບຜູ້ຄົນຂອງຊຳ,
ແລະ ຈະຂ້າພວກເຂົາ ຈົນວ່າພວກເຂົາຖືກ
ທຳລາຍຈົນໝົດສິ້ນ; ແລະ ຜູ້ຄົນຂອງກາ
ນາອານຈະແຍກກັນອອກໄປໃນແຜ່ນດິນ,
ແລະ ແຜ່ນດິນຈະແຫ້ງແລ້ງ ແລະ ບໍ່ເກີດ
ຜົນ, ແລະ ບໍ່ມີຜູ້ຄົນອື່ນໃດຈະອາໄສຢູ່ທີ່
ນັ້ນນອກຈາກຜູ້ຄົນຂອງການາອານ;
8 ເພາະ ຈົ່ງ ເບິ່ງ, ພຣະຜູ້ເປັນເຈົ້າຈະ
ສາບແຊ່ງແຜ່ນດິນດ້ວຍຄວາມຮ້ອນທີ່ສຸດ,
ແລະ ຄວາມແຫ້ງແລ້ງຂອງມັນຈະເປັນໄປ
ເຊັ່ນນັ້ນຕະຫລອດການ; ແລະ [ກ]ຄວາມດຳ
ໄດ້ເກີດກັບລູກຫລານທັງປວງຂອງການາ
ອານ, ຈົນວ່າພວກເຂົາຖືກກຽດຊັງໃນບັນ
ດາຜູ້ຄົນທັງປວງ.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ
ຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງ
ເບິ່ງເຖີດ; ແລະ ຂ້າພະເຈົ້າໄດ້ເບິ່ງ, ແລະ
ຂ້າພະເຈົ້າໄດ້ເຫັນແຜ່ນດິນຊາໂຣນ, ແລະ
ແຜ່ນດິນເອນົກ, ແລະ ແຜ່ນດິນອອມເນີ,
ແລະ ແຜ່ນດິນເຮໄນ, ແລະ ແຜ່ນດິນເຊມ,
ແລະ ແຜ່ນດິນເຮເນີ, ແລະ ແຜ່ນດິນຮານັນ
ນີຫາ, ແລະ ຜູ້ອາໄສທັງປວງຢູ່ໃນນັ້ນ;
10 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າວ່າ: ຈົ່ງໄປຫາຜູ້ຄົນພວກນີ້, ແລະ
ກ່າວກັບພວກເຂົາວ່າ—ຈົ່ງ [ກ]ກັບໃຈ, ຖ້າ
ບໍ່ດັ່ງນັ້ນ ເຮົາຈະອອກມາ ແລະ ລົງໂທດ
ພວກເຂົາດ້ວຍຄຳສາບແຊ່ງ, ແລະ ພວກ
ເຂົາຈະຕາຍ.
11 ແລະ ພຣະອົງໄດ້ປະທານພຣະບັນ
ຍັດຂໍ້ໜຶ່ງໃຫ້ຂ້າພະ ເຈົ້າ ວ່າຂ້າ ພະເຈົ້າ
ຄວນໃຫ້ [ກ]ບັບຕິສະມາໃນພຣະນາມຂອງ
ພຣະບິດາ, ແລະ ຂອງພຣະບຸດ, ຊຶ່ງເຕັມ
ໄປດ້ວຍ [ຂ]ພຣະຄຸນ ແລະ ຄວາມຈິງ, ແລະ
ຂອງ [ຄ]ພຣະວິນຍານບໍລິສຸດ, ຊຶ່ງເປັນ
ພະຍານເຖິງພຣະບິດາ ແລະ ພຣະບຸດ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເອນົກໄດ້ເອີ້ນຫາຜູ້ຄົນທັງປວງຕໍ່ໄປ, ຍົກ
ເວັ້ນແຕ່ຜູ້ຄົນຂອງການາອານ, ໃຫ້ກັບໃຈ;
13 ແລະ [ກ]ສັດທາຂອງເອນົກນັ້ນຍິ່ງໃຫຍ່
ຈົນວ່າເພິ່ນໄດ້ນຳພາຜູ້ຄົນຂອງພຣະເຈົ້າ,
ແລະ ສັດຕູຂອງພວກເຂົາໄດ້ອອກມາສູ້ຮົບ
ກັບພວກເຂົາ; ແລະ ເພິ່ນໄດ້ກ່າວພຣະຄຳ
ຂອງພຣະຜູ້ເປັນເຈົ້າ, ແລະ ແຜ່ນດິນໂລກ
ສັ່ນສະເທືອນ, ແລະ [ຂ]ພູເຂົາໄດ້ຫລົບໜີ,
ແມ່ນແຕ່ຕາມຄຳສັ່ງຂອງເພິ່ນ; ແລະ [ຄ]ແມ່
ນ້ຳຂອງສາຍນ້ຳໄດ້ຫັນໜີຈາກເສັ້ນທາງ
ຂອງມັນ; ແລະ ສຽງຄວນຄາງຂອງໂຕສິງ
ໄດ້ຍິນອອກມາຈາກຖິ່ນແຫ້ງແລ້ງກັນດານ;
ແລະ ປະຊາຊາດທັງປວງຢ້ານກົວຫລາຍ
ທີ່ສຸດ, ຖ້ອຍຄຳຂອງເອນົກມີພະລັງຫລາຍ,
ແລະ ພາສາຂອງເພິ່ນມີ [ງ]ອຳນາດຫລາຍ
ຊຶ່ງພຣະເຈົ້າໄດ້ມອບໃຫ້ແກ່ເພິ່ນ.
14 ມີດິນປະກົດຂຶ້ນມາຈາກຄວາມເລິກ
ຂອງທະເລ, ແລະ ສັດຕູຂອງຜູ້ຄົນຂອງ
ພຣະເຈົ້າແມ່ນໃຫຍ່ຫລວງ, ຈົນວ່າພວກ
ເຂົາໄດ້ຫລົບໜີໄປ ແລະ ຢືນຢູ່ຫ່າງໄກ
ແລະ ໄປຢູ່ເທິງດິນທີ່ປະກົດຂຶ້ນມາຈາກ
ຄວາມເລິກຂອງທະເລ.

8 ກ 2 ນຟ 26:33.
10 ກ ມຊ 6:57.
ຄມພ ກັບໃຈ, ການກັບໃຈ.
11 ກ ຄມພ ບັບຕິສະມາ,
ໃຫ້ບັບຕິສະມາ.
ຂ ຄມພ ພຣະຄຸນ.
ຄ ຄມພ ພຣະວິນຍານບໍລິສຸດ.
13 ກ ຄມພ ສັດທາ.
ຂ ມທ 17:20.
ຄ ມຊ 6:34.
ງ ຄມພ ຖານະປະໂລຫິດ;
ອຳນາດ.

15 ແລະ [ກ]ຍັກ ຂອງແຜ່ນ ດິນ ກໍ ເໝືອນ
ກັນ, ໄດ້ຢືນຢູ່ຫ່າງໄກ; ແລະ ມີຄຳສາບແຊ່ງ
ອອກໄປສູ່ຜູ້ຄົນທັງປວງທີ່ຕໍ່ສູ້ກັບພຣະ
ເຈົ້າ;
16 ແລະ ນັບແຕ່ເວລານັ້ນມາ ໄດ້ມີສົງ
ຄາມ ແລະ ການນອງເລືອດໃນບັນດາພວກ
ເຂົາ; ແຕ່ພຣະຜູ້ເປັນເຈົ້າໄດ້ມາ ແລະ ສະ
ຖິດຢູ່ກັບຜູ້ຄົນຂອງພຣະອົງ, ແລະ ພວກ
ເຂົາໄດ້ດຳລົງຢູ່ໃນຄວາມຊອບທຳ.
17 [ກ]ຄວາມຢ້ານກົວພຣະຜູ້ເປັນເຈົ້າຢູ່
ເທິງປະຊາຊາດທັງປວງ, ລັດສະໝີພາບ
ຂອງພຣະຜູ້ເປັນເຈົ້າແມ່ນມີຢູ່ຢ່າງຫລວງ
ຫລາຍ, ຊຶ່ງຢູ່ເທິງຜູ້ຄົນຂອງພຣະອົງ.
ແລະ ພຣະຜູ້ເປັນເຈົ້າໄດ້ [ຂ]ອວຍພອນ
ແຜ່ນດິນ, ແລະ ພວກເຂົາໄດ້ຮັບພອນຢູ່
ເທິງພູ, ແລະ ເທິງບ່ອນສູງ, ແລະ ຈະເລີນ
ຮຸ່ງເຮືອງ.
18 ແລະ ພຣະຜູ້ເປັນເຈົ້າໄດ້ເອີ້ນຜູ້ຄົນ
ຂອງພຣະອົງວ່າ [ກ]ຊີໂອນ, ເພາະວ່າພວກ
ເຂົາມີໃຈ [ຂ]ດຽວ ແລະ ມີຄວາມຄິດດຽວ,
ແລະ ໄດ້ດຳລົງຢູ່ໃນຄວາມຊອບທຳ; ແລະ
ບໍ່ມີຄົນຍາກຈົນໃນບັນດາພວກເຂົາ.
19 ແລະ ເອນົກໄດ້ສັ່ງສອນຕໍ່ໄປໃນ
ຄວາມຊອບທຳໃຫ້ແກ່ຜູ້ຄົນຂອງພຣະເຈົ້າ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນວັນ
ເວລາຂອງເພິ່ນ, ຄືເພິ່ນໄດ້ສ້າງເມືອງທີ່
ເອີ້ນວ່າເມືອງບໍລິສຸດ, ແມ່ນແຕ່ ຊີໂອນ.
20 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເອນົກໄດ້ເວົ້າລົມກັບພຣະຜູ້ເປັນເຈົ້າ;
ແລະ ເພິ່ນໄດ້ກ່າວກັບພຣະຜູ້ເປັນເຈົ້າວ່າ:
ແນ່ນອນວ່າ [ກ]ຊີໂອນຈະຢູ່ໃນຄວາມປອດ
ໄພຕະຫລອດການ. ແຕ່ພຣະຜູ້ເປັນເຈົ້າ
ໄດ້ກ່າວກັບ ເອນົກວ່າ: ເຮົາໄດ້ອວຍພອນ
ຊີໂອນ, ແຕ່ຜູ້ຄົນທີ່ເຫລືອຢູ່ເຮົາໄດ້ສາບ
ແຊ່ງ.
21 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ເອນົກເຫັນ
ຜູ້ອາໄສທັງປວງຂອງແຜ່ນດິນໂລກ; ແລະ
ເພິ່ນໄດ້ເຫັນ, ແລະ ເບິ່ງແມ, ຊີໂອນ, ຕາມ
ຄວາມສົມຄວນຂອງເວລາ, ໄດ້ຖືກ [ກ]ເອົາ
ຂຶ້ນໄປສະຫວັນ. ແລະ ພຣະຜູ້ເປັນເຈົ້າໄດ້
ກ່າວກັບເອນົກ: ຈົ່ງເບິ່ງ ບ່ອນເຮົາສະຖິດຢູ່
ຕະຫລອດການ.
22 ແລະ ເອນົກກໍໄດ້ເຫັນຜູ້ຄົນທີ່ເຫລືອ
ຢູ່ຜູ້ຊຶ່ງເປັນພວກລູກຊາຍຂອງອາດາມ;
ແລະ ພວກເຂົາເປັນຊາດປະສົມໃນບັນດາ
ລູກຫລານທັງປວງຂອງອາດາມ ຍົກເວັ້ນ
ແຕ່ລູກຫລານຂອງກາອິນ, ເພາະວ່າລູກ
ຫລານຂອງກາອິນເປັນ [ກ]ຄົນດຳ, ແລະ ບໍ່
ມີບ່ອນຢູ່ໃນທ່າມກາງພວກເຂົາ.
23 ແລະ ຫລັງຈາກວ່າຊີໂອນໄດ້ຖືກຮັບ
ຂຶ້ນໄປ [ກ]ສະຫວັນແລ້ວ, ເອນົກໄດ້ [ຂ]ເຫັນ,
ແລະ ເບິ່ງແມ, ປະຊາຊາດ [ຄ]ທັງປວງຂອງ
ແຜ່ນດິນໂລກໄດ້ຢູ່ຕໍ່ໜ້າເພິ່ນ;
24 ແລະ ລຸ້ນແລ້ວລຸ້ນເລົ່າໄດ້ເກີດມາ;
ແລະ ເອນົກໄດ້ຢູ່ບ່ອນສູງ ແລະ ຖືກ [ກ]ຍົກ
ຂຶ້ນ, ແມ່ນແຕ່ໃນພຣະຊວງ ຂອງພຣະ
ບິດາ, ແລະ ຂອງບຸດມະນຸດ; ແລະ ຈົ່ງເບິ່ງ,
ອຳນາດຂອງຊາຕານມີຢູ່ທົ່ວພື້ນແຜ່ນດິນ
ໂລກ.
25 ແລະ ເພິ່ນໄດ້ເຫັນເຫລົ່າທູດລົງມາ
ຈາກສະຫວັນ; ແລະ ເພິ່ນໄດ້ຍິນສຽງດັງ

15 *ກ* ປຖກ 6:4; ມຊ 8:18.
17 *ກ* ອພຍ 23:27.
*ຂ* 1 ຂຄ 28:7–8;
1 ນຟ 17:35.
18 *ກ* ຄມພ ຊີໂອນ.
*ຂ* ກຈກ 4:32;
ຟລປ 2:1–4.
ຄມພ ເປັນອັນໜຶ່ງດຽວກັນ,
ຄວາມເປັນອັນໜຶ່ງດຽວກັນ.
20 *ກ* ມຊ 7:62–63.
ຄມພ ເຢຣູຊາເລັມໃໝ່.
21 *ກ* ມຊ 7:69.
22 *ກ* 2 ນຟ 26:33.
23 *ກ* ຄມພ ສະຫວັນ.
*ຂ* ຄມພ ພາບນິມິດ.
*ຄ* ຄພ 88:47;
ມຊ 1:27–29.
24 *ກ* 2 ກຣທ 12:1–4.

ກ່າວ ວ່າ: ວິບັດ, ວິບັດ ຈົ່ງ ມີ ແກ່ ຜູ້ ອາ ໄສ ຂອງແຜ່ນດິນໂລກ.

26 ແລະ ເພິ່ນໄດ້ເຫັນຊາຕານ; ແລະ ມັນ ມີ [ກ]ໂສ້ເສັ້ນໃຫຍ່ຢູ່ໃນມືຂອງມັນ, ແລະ ມັນ ບັງຜືນ ແຜ່ນ ດິນ ໂລກ ດ້ວຍ [ຂ]ຄວາມ ມືດ; ແລະ ມັນໄດ້ແຫງນໜ້າຂຶ້ນ ແລະ ຫົວ, ແລະ [ຄ]ບໍລິວານຂອງມັນປິຕິຍິນດີ.

27 ແລະ ເອນົກ ໄດ້ ເຫັນ [ກ]ເຫລົ່າທູດລົງ ມາຈາກສະຫວັນ, ໂດຍສະແດງ [ຂ]ປະຈັກ ພະຍານ ເຖິງ ພຣະບິດາ ແລະ ພຣະບຸດ; ແລະ ພຣະວິນຍານບໍລິສຸດໄດ້ລົງມາເທິງ ຫລາຍຄົນ, ແລະ ພວກເຂົາໄດ້ຖືກຮັບຂຶ້ນ ໄປຫາຊີໂອນໂດຍອຳນາດຂອງສະຫວັນ.

28 ແລະ ເຫດ ການ ໄດ້ ບັງເກີດຂຶ້ນຄື ພຣະເຈົ້າແຫ່ງສະຫວັນໄດ້ທອດພຣະເນດ ເບິ່ງຜູ້ຄົນທີ່ເຫລືອຢູ່, ແລະ ພຣະອົງໄດ້ກັນ ແສງ; ແລະ ເອນົກໄດ້ເປັນພະຍານ ເຖິງ ເລື່ອງນີ້, ໂດຍກ່າວວ່າ: ສະຫວັນຮ້ອງໄຫ້ ໄດ້ແນວໃດ, ແລະ ຫລັ່ງນ້ຳຕາລົງມາຄືກັນ ກັບສາຍຝົນຕົກໃສ່ພູ?

29 ແລະ ເອນົກ ໄດ້ ກ່າວ ກັບ ພຣະ ຜູ້ ເປັນເຈົ້າວ່າ: ພຣະອົງ [ກ]ກັນແສງໄດ້ແນວ ໃດ, ໂດຍທີ່ເຫັນວ່າພຣະອົງຊົງບໍລິສຸດ, ແລະ ຈາກຕະຫລອດຊົ່ວນິລັນດອນເຖິງ ຕະຫລອດຊົ່ວນິລັນດອນ?

30 ແລະ ເປັນໄປໄດ້ແນວໃດທີ່ມະນຸດ ຈະສາມາດນັບ ແມ່ນ ແຕ່ ໜ້ອຍ ໜຶ່ງຂອງ [ກ]ແຜ່ນດິນໂລກໄດ້, ແທ້ຈິງແລ້ວ, ແຜ່ນດິນ ໂລກນັບເປັນລ້ານໆທີ່ຄືກັນນີ້, ນີ້ຄົງບໍ່ໄດ້ ເປັນການ ເລີ່ມຕົ້ນຂອງ [ຂ]ການສ້າງຂອງ ພຣະອົງ; ແລະ ຜ້າມ່ານຂອງພຣະອົງຍັງ ບັງກັ້ນໄວ້ຢູ່; ແຕ່ວ່າພຣະອົງຢູ່ທີ່ນັ້ນ, ແລະ ຊວງເອິກຂອງພຣະອົງຢູ່ທີ່ນັ້ນ; ແລະ ພຣະ ອົງທ່ຽງທຳນຳອີກ; ພຣະອົງມີເມດຕາ ແລະ ກະລຸນາຕະຫລອດການ;

31 ແລະ ພຣະອົງໄດ້ຮັບເອົາຊີໂອນໄວ້ ໃນຊວງເອິກຂອງພຣະອົງເອງ, ຈາກການ ສ້າງທັງປວງຂອງພຣະອົງ, ຈາກຕະຫລອດ ຊົ່ວ ນິ ລັນ ດອນ ເຖິງຕະຫລອດ ຊົ່ວນິ ລັນ ດອນ; ແລະ ບໍ່ມີສິ່ງໃດເລີຍນອກຈາກແຕ່ [ກ]ສັນຕິສຸກ, [ຂ]ຄວາມຍຸດຕິທຳ, ແລະ [ຄ]ຄວາມ ຈິງເປັນສະຖານທີ່ຂອງພຣະບັນລັງຂອງ ພຣະອົງ; ແລະ ຄວາມເມດຕາຈະອອກໄປ ຕໍ່ພຣະພັກຂອງພຣະອົງ ແລະ ບໍ່ມີທີ່ສຸດ; ພຣະອົງກັນແສງໄດ້ແນວໃດ?

32 ພຣະ ຜູ້ ເປັນ ເຈົ້າ ໄດ້ ກ່າວ ກັບ ເອນົກ ວ່າ: ຈົ່ງເບິ່ງ ອ້າຍເອື້ອຍນ້ອງເຫລົ່ານີ້ຂອງ ເຈົ້າ; ພວກເຂົາເປັນ [ກ]ຝີມືຈາກມືຂອງເຮົາ ເອງ, ແລະ ເຮົາໄດ້ມອບ [ຂ]ຄວາມຮູ້ຂອງ ພວກເຂົາໃຫ້ແກ່ພວກເຂົາ, ໃນມື້ທີ່ເຮົາໄດ້ ສ້າງພວກເຂົາ; ແລະ ໃນສວນເອເດນ, ເຮົາ ໄດ້ມອບ [ຄ]ອຳເພີໃຈໃຫ້ມະນຸດ;

33 ແລະ ກັບອ້າຍເອື້ອຍນ້ອງຂອງເຈົ້າ ເຮົາໄດ້ກ່າວ, ແລະ ໄດ້ປະທານບັນຍັດໃຫ້, ວ່າພວກເຂົາຈະ [ກ]ຮັກກັນແລະກັນ, ແລະ ວ່າພວກເຂົາຄວນເລືອກເອົາເຮົາ, ພຣະ ບິດາພວກເຂົາ; ແຕ່ຈົ່ງເບິ່ງ, ພວກເຂົາປາດ ສະຈາກຄວາມຮັກ, ແລະ ພວກເຂົາກຽດຊັງ ສາຍເລືອດຂອງຕົນເອງ;

34 ແລະ [ກ]ໄຟ ແຫ່ງ ຄວາມ ເຄືອງ ແຄ້ນ

26 *ກ* ແອວ 12:10–11.
*ຂ* ອຊຢ 60:1–2.
*ຄ* ຢດ 1:6; ຄພ 29:36–37.
27 *ກ* ຄມພ ທູດ, ເທວະດາ.
*ຂ* ຄມພ ປະຈັກພະຍານ.
29 *ກ* ອຊຢ 63:7–10.
30 *ກ* ຄພ 76:24; ມຊ 1:33.
*ຂ* ຄມພ ສ້າງ, ການສ້າງ.
31 *ກ* ຄມພ ສະຫງົບ, ຄວາມສະຫງົບ.
*ຂ* ຄມພ ຍຸດຕິທຳ, ຄວາມຍຸດຕິທຳ.
*ຄ* ຄມພ ຈິງ, ຄວາມຈິງ.
32 *ກ* ມຊ 1:4.
*ຂ* ຄມພ ຄວາມຮູ້.
*ຄ* ຄມພ ອຳເພີໃຈ.
33 *ກ* ຄມພ ຮັກ, ຄວາມຮັກ.
34 *ກ* ອຊຢ 30:27; ນຮ 1:6; ຄພ 35:14.

ຂອງເຮົາໄດ້ເກີດກັບພວກເຂົາ; ແລະ ໃນ
ຄວາມບໍ່ພໍໃຈທີ່ຮ້ອນດັ່ງໄຟຂອງເຮົາ, ເຮົາ
ຈະສົ່ງ [ຂ]ນ້ຳຖ້ວມໄປຍັງພວກເຂົາ, ເພາະ
ຄວາມຄຽດແຄ້ນອັນຮຸນແຮງຂອງເຮົາໄດ້
ເກີດກັບພວກເຂົາ.
35 ຈົ່ງເບິ່ງ, ເຮົາຄືພຣະເຈົ້າ; [ກ]ພຣະຜູ້ບໍລິ
ສຸດຄືນາມຂອງເຮົາ; ພຣະຜູ້ປຶກສາຄືນາມ
ຂອງເຮົາ; ແລະ ບໍ່ມີທີ່ສຸດ ແລະ ນິລັນດອນ
ຄື [ຂ]ນາມຂອງເຮົານຳອີກ.
36 ດັ່ງນັ້ນ, ເຮົາຈຶ່ງສາມາດເດ່ມືຂອງເຮົາ
ອອກໄປ ແລະ ຄວບຄຸມການສ້າງທັງປວງ
ຂອງເຮົາ ຊຶ່ງເຮົາໄດ້ສ້າງຂຶ້ນ; ແລະ [ກ]ຕາ
ຂອງເຮົາສາມາດສຽບແທງພວກເຂົານຳ
ອີກ, ແລະ ໃນບັນດາຝີມືທັງປວງຂອງເຮົາ
ບໍ່ເຄີຍມີ [ຂ]ຄວາມຊົ່ວຮ້າຍອັນໃຫຍ່ຫລວງດັ່ງ
ທີ່ມີຢູ່ໃນບັນດາອ້າຍເອື້ອຍນ້ອງຂອງເຈົ້າ.
37 ແຕ່ຈົ່ງເບິ່ງ, ບາບຂອງພວກເຂົາຈະ
ຕົກຢູ່ເທິງຫົວຂອງບັນພະບຸລຸດຂອງພວກ
ເຂົາ; ຊາຕານຈະເປັນບິດາຂອງພວກເຂົາ,
ແລະ ຄວາມທຸກທໍລະມານຈະເປັນຊາຕາ
ກຳຂອງພວກເຂົາ; ແລະ ທົ່ວທັງສະຫວັນ
ຈະຮ້ອງໄຫ້ນຳພວກເຂົາ, ແມ່ນແຕ່ຝີມືທັງ
ປວງຈາກມືຂອງເຮົາ; ດັ່ງນັ້ນ ສະຫວັນບໍ່
ຄວນຮ້ອງໄຫ້ບໍ, ໂດຍເຫັນວ່າຄົນເຫລົ່ານີ້
ຈະທົນທຸກ?
38 ແຕ່ຈົ່ງເບິ່ງ, ຄົນເຫລົ່ານີ້ທີ່ເຈົ້າຫລຽວ
ເຫັນຈະຕາຍໃນນ້ຳຖ້ວມ; ແລະ ຈົ່ງເບິ່ງ,
ເຮົາຈະຂັງພວກເຂົາ; ເຮົາໄດ້ຕຽມ [ກ]ຄຸກໄວ້
ໃຫ້ພວກເຂົາແລ້ວ.
39 ແລະ [ກ]ຜູ້ທີ່ເຮົາເລືອກໄວ້ໄດ້ອ້ອນ
ວອນຢູ່ຕໍ່ໜ້າເຮົາ. ດັ່ງນັ້ນ, ລາວຈຶ່ງໄດ້ຮັບ
ທຸກທໍລະມານເພື່ອບາບຂອງພວກເຂົາ;
ຕາບໃດທີ່ພວກເຂົາຈະກັບໃຈໃນວັນທີ່ [ຂ]ຜູ້
ທີ່ເຮົາເລືອກໄວ້ຈະກັບມາຫາເຮົາ, ແລະ
ຈົນເຖິງວັນນັ້ນ ພວກເຂົາຈະຢູ່ໃນ [ຄ]ຄວາມ
ທໍລະມານ;
40 ດັ່ງນັ້ນ, ເພາະດ້ວຍເຫດນີ້ສະຫວັນ
ຈຶ່ງຮ້ອງໄຫ້, ແທ້ຈິງແລ້ວ, ແລະ ຝີມືທັງປວງ
ຈາກມືຂອງເຮົາ.
41 ແລະ ເຫດການໄດ້ບັງເກີດຂຶ້ນ ຄື
ພຣະຜູ້ເປັນເຈົ້າໄດ້ກ່າວກັບເອນົກ, ແລະ
ໄດ້ບອກເອນົກເຖິງການກະທຳທັງປວງ
ຂອງລູກຫລານມະນຸດ; ດັ່ງນັ້ນເອນົກຈຶ່ງຮູ້,
ແລະ ເຫັນຄວາມຊົ່ວຮ້າຍຂອງພວກເຂົາ,
ແລະ ຄວາມທຸກທໍລະມານຂອງພວກເຂົາ,
ແລະ ໄດ້ຮ້ອງໄຫ້ ແລະ ໄດ້ເດ່ແຂນອອກ
ໄປ, ແລະ [ກ]ໃຈຂອງລາວພອງກວ້າງດັ່ງ
ຊົ່ວນິລັນດອນ; ແລະ ອຸທອນຂອງລາວສົງ
ສານ; ແລະ ຕະຫລອດຊົ່ວນິລັນດອນໄດ້
ສັ່ນສະເທືອນ.
42 ແລະ ເອນົກກໍໄດ້ເຫັນ [ກ]ໂນອາ ນຳ
ອີກ, ແລະ [ຂ]ຄອບຄົວຂອງເພິ່ນ; ວ່າລູກ
ຫລານຂອງໂນອາຈະລອດ ດ້ວຍຄວາມ
ລອດທາງໂລກ;
43 ດັ່ງນັ້ນ ເອນົກຈຶ່ງໄດ້ເຫັນວ່າ ໂນອາ
ໄດ້ສ້າງ [ກ]ເຮືອ; ແລະ ວ່າພຣະຜູ້ເປັນເຈົ້າ
ໄດ້ຍິ້ມໃສ່ມັນ, ແລະ ໄດ້ຮັກສາມັນໄວ້ຢູ່ໃນ
ພຣະຫັດຂອງພຣະອົງ; ແຕ່ສ່ວນຄົນຊົ່ວຜູ້

34 *ຂ* ປຖກ 7:4, 10;
ມຊ 8:17, 24.
ຄມພ ນ້ຳຖ້ວມໃນວັນ
ເວລາຂອງໂນອາ.
35 *ກ* ມຊ 6:57.
*ຂ* ມຊ 1:3.
36 *ກ* ຄພ 38:2; 88:41;
ມຊ 1:35–37.
*ຂ* ປຖກ 6:5–6;
ມຊ 8:22, 28–30.
38 *ກ* 1 ປຕ 3:18–20.
ຄມພ ນະລົກ.
39 *ກ* ອສ ພຣະຜູ້ຊ່ວຍໃຫ້ລອດ.
*ຂ* ມຊ 4:2; ອຣຣ 3:27.
ຄມພ ພຣະເຢຊູຄຣິດ.
*ຄ* ຄມພ ອັບປະໂຫຍດ,
ຄວາມອັບປະໂຫຍດ.
41 *ກ* ມຊຢ 28:3.
ຄມພ ເມດຕາສົງສານ,
ຄວາມເມດຕາສົງສານ.
42 *ກ* ຄມພ ໂນອາ, ປິຕຸໃນ
ພຣະຄຣິສຕະທຳຄຳພີ.
*ຂ* ມຊ 8:12.
43 *ກ* ປຖກ 6:14–16; ອທ 6:7.

ທີ່ເຫລືອຢູ່ ນ້ຳຖ້ວມໄດ້ມາເຖິງ ແລະ ກືນ
ກິນພວກເຂົາ.
44 ແລະ ໃນຂະນະທີ່ເອນົກໄດ້ເຫັນສິ່ງ
ນີ້, ເພິ່ນມີຄວາມຂົມຂື່ນໃນຈິດວິນຍານ,
ແລະ ຮ້ອງໄຫ້ນຳອ້າຍ ເອື້ອຍ ນ້ອງ ຂອງ
ເພິ່ນ, ແລະ ໄດ້ກ່າວກັບສະຫວັນວ່າ: ຂ້າ
ພຣະອົງຈະ [ກ]ປະຕິເສດບໍ່ຮັບ ເອົາການ
ປອບໂຍນ; ແຕ່ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອນົກວ່າ: ຈົ່ງລື້ນເລີງ ແລະ ເບີກບານເຖີດ;
ແລະ ເບິ່ງເຖີດ.
45 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເອນົກໄດ້ຫລຽວເບິ່ງ; ແລະ ຈາກໂນອາ,
ເພິ່ນໄດ້ເຫັນຄອບຄົວທັງປວງຂອງແຜ່ນ
ດິນໂລກ; ແລະ ເພິ່ນໄດ້ທູນຕໍ່ພຣະຜູ້ເປັນ
ເຈົ້າ, ໂດຍກ່າວວ່າ: ເມື່ອໃດວັນຂອງພຣະ
ຜູ້ເປັນເຈົ້າຈະມາເຖິງ? ເມື່ອໃດໂລຫິດຂອງ
ພຣະຜູ້ຊອບທຳຈະຫລັ່ງ, ເພື່ອວ່າຜູ້ຄົນທັງ
ປວງທີ່ໂສກເສົ້າຈະໄດ້ຮັບ [ກ]ການຊຳລະໃຫ້
ບໍລິສຸດ ແລະ ມີຊີວິດນິລັນດອນ?
46 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ:
ມັນຈະເກີດຂຶ້ນໃນ [ກ]ເວລາອັນຮຸ່ງໂລດ, ໃນ
ວັນເວລາຂອງຄວາມຊົ່ວຮ້າຍ ແລະ ການ
ແກ້ແຄ້ນ.
47 ແລະ ຈົ່ງ ເບິ່ງ, ເອນົກ ໄດ້ ເຫັນ ວັນ
ແຫ່ງ ການ ສະເດັດມາຂອງ ບຸດມະນຸດ,
ແມ່ນແຕ່ໃນເນື້ອໜັງ; ແລະ ຈິດວິນຍານ
ຂອງເພິ່ນໄດ້ປິຕິຍິນດີ, ໂດຍກ່າວວ່າ:
ພຣະ ຜູ້ ຊອບ ທຳໄດ້ ຖືກ ຍົກ ຂຶ້ນ, ແລະ
[ກ]ພຣະເມສານ້ອຍໄດ້ຖືກປະຫານນັບຕັ້ງ
ແຕ່ການວາງຮາກຖານຂອງໂລກ; ແລະ
ຜ່ານສັດທາຂ້າພະເຈົ້າໄດ້ຢູ່ໃນຊວງເອິກ
ຂອງພຣະບິດາ, ແລະ ຈົ່ງເບິ່ງ, [ຂ]ຊີໂອນຢູ່
ກັບຂ້າພະເຈົ້າ.
48 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ
ຄື ເອນົກໄດ້ຫລຽວເບິ່ງ [ກ]ແຜ່ນດິນໂລກ;
ແລະ ເພິ່ນໄດ້ຍິນສຽງຈາກອຸທອນຂອງ
ນາງ, ໂດຍກ່າວວ່າ: ວິບັດ, ວິບັດ ຄືເຮົາ,
ມານດາຂອງມະນຸດ; ເຮົາເຈັບປວດ, ເຮົາ
ອິດເມື່ອຍ, ເພາະຄວາມຊົ່ວຮ້າຍຂອງລູກໆ
ຂອງເຮົາ. ເມື່ອໃດເຮົາຈຶ່ງຈະໄດ້ [ຂ]ພັກ
ຜ່ອນ, ແລະ ຖືກຊຳລະລ້າງຈາກ [ຄ]ຄວາມ
ສົກກະປົກ ຊຶ່ງໄດ້ອອກໄປຈາກເຮົາ? ເມື່ອ
ໃດນໍພຣະຜູ້ສ້າງຂອງເຮົາຈຶ່ງຈະຊຳລະເຮົາ
ໃຫ້ບໍລິສຸດ, ເພື່ອວ່າເຮົາຈະໄດ້ພັກຜ່ອນ,
ແລະ ຄວາມຊອບທຳຊົ່ວໄລຍະເວລາໜຶ່ງ
ຈະຢູ່ເທິງໃບໜ້າຂອງເຮົາ?
49 ແລະ ເມື່ອເອນົກໄດ້ຍິນແຜ່ນດິນ
ໂລກເປັນທຸກ, ເພິ່ນກໍໄດ້ຮ້ອງໄຫ້, ແລະ
ໄດ້ທູນຕໍ່ພຣະຜູ້ເປັນເຈົ້າ, ໂດຍກ່າວວ່າ:
ໂອ້ ພຣະຜູ້ເປັນເຈົ້າ, ພຣະອົງຈະບໍ່ເມດ
ຕາສົງສານແຜ່ນດິນໂລກແດ່ບໍ? ພຣະອົງ
ຈະບໍ່ອວຍພອນລູກຫລານຂອງໂນອາ
ແດ່ບໍ?
50 ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື
ເອນົກໄດ້ທູນຕໍ່ໄປອີກກັບພຣະຜູ້ເປັນເຈົ້າ,
ໂດຍກ່າວວ່າ: ຂ້າພຣະອົງທູນຂໍນຳພຣະ
ອົງ, ໂອ້ ພຣະຜູ້ເປັນເຈົ້າ, ໃນພຣະນາມ
ຂອງພຣະອົງດຽວທີ່ຖືກຳເນີດຂອງພຣະ
ອົງ, ແມ່ນແຕ່ພຣະເຢຊູຄຣິດ, ວ່າພຣະອົງ
ຈະມີເມດຕາຕໍ່ໂນອາ ແລະ ລູກຫລານຂອງ
ເພິ່ນ, ເພື່ອວ່າແຜ່ນດິນໂລກຈະບໍ່ຖືກປົກ
ຄຸມດ້ວຍນ້ຳຖ້ວມອີກເລີຍ.

44 ກ ພສສ 77:2;
ອຫ 15:3.
45 ກ ຄມພ ຊຳລະໃຫ້ບໍລິສຸດ,
ການຊຳລະໃຫ້ບໍລິສຸດ.
46 ກ ມຊ 5:57.
47 ກ ຄມພ ພຣະເມສານ້ອຍ
ຂອງພຣະເຈົ້າ.
ຂ ມຊ 7:21.
48 ກ ຄມພ ແຜ່ນດິນໂລກ—
ການຊຳລະລ້າງ
ແຜ່ນດິນໂລກ.
ຂ ມຊ 7:54, 58, 64.
ຄ ຄມພ ສົກກະປົກ,
ຄວາມສົກກະປົກ.

51 ແລະ ພຣະຜູ້ເປັນເຈົ້າບໍ່ສາມາດປະຕິ
ເສດ; ແລະ ພຣະອົງໄດ້ເຮັດພັນທະສັນຍາ
ກັບເອນົກ, ແລະ ໄດ້ສາບານກັບເພິ່ນ, ວ່າ
ພຣະອົງຈະຢັບຢັ້ງ [ກ]ນ້ຳຖ້ວມໄວ້; ວ່າພຣະ
ອົງຈະເອີ້ນຫາລູກຫລານຂອງໂນອາ;
52 ແລະ ພຣະອົງໄດ້ສົ່ງຄຳສັ່ງທີ່ບໍ່ປ່ຽນ
ແປງອອກໄປ, ວ່າ [ກ]ຜູ້ທີ່ເຫລືອຢູ່ຂອງເຊື້ອ
ສາຍຂອງເພິ່ນຈະຖືກພົບເຫັນສະເໝີຢູ່ໃນ
ບັນດາປະຊາຊາດທັງປວງ, ໃນຂະນະທີ່
ແຜ່ນດິນໂລກຍັງຕັ້ງຢູ່;
53 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ຂໍ
ໃຫ້ເຂົາເປັນສຸກເຖີດ ຜູ້ຊຶ່ງຜ່ານເຊື້ອສາຍ
ຂອງເຂົາ ພຣະເມຊີອາຈະສະເດັດມາ;
ພຣະອົງໄດ້ກ່າວວ່າ—ເຮົາຄື [ກ]ພຣະເມຊີ
ອາ, [ຂ]ກະສັດແຫ່ງຊີໂອນ, [ຄ]ຫີນສີລາຂອງ
ສະຫວັນ, ຊຶ່ງກວ້າງໃຫຍ່ດັ່ງຊົ່ວນິລັນດອນ;
ຜູ້ໃດກໍຕາມທີ່ເຂົ້າທາງປະຕູ ແລະ [ງ]ປີນຂຶ້ນ
ໂດຍອາໄສເຮົາຈະບໍ່ມີວັນຕົກ; ດັ່ງນັ້ນ, ຜູ້
ຄົນທີ່ເຮົາໄດ້ກ່າວເຖິງຍ່ອມເປັນສຸກ, ເພາະ
ວ່າພວກເຂົາຈະອອກມາດ້ວຍ [ຈ]ເພງແຫ່ງ
ຄວາມສຸກອັນເປັນນິດ.
54 ແລະ ເຫດການໄດ້ບັງເກີດຂຶ້ນຄື
ເອນົກໄດ້ທູນຕໍ່ພຣະຜູ້ເປັນເຈົ້າ, ໂດຍກ່າວ
ວ່າ: ເມື່ອບຸດມະນຸດສະເດັດມາໃນເນື້ອ
ໜັງ, ແຜ່ນດິນໂລກຈະໄດ້ພັກຜ່ອນບໍ? ຂ້າ
ພຣະອົງອ້ອນວອນພຣະອົງ ຂໍຈົ່ງສະແດງ
ສິ່ງເຫລົ່ານີ້ໃຫ້ຂ້າພຣະອົງເຫັນແດ່ທ້ອນ.
55 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອນົກວ່າ: ຈົ່ງເບິ່ງເຖີດ, ແລະ ເພິ່ນໄດ້
ຫລຽວເບິ່ງ ແລະ ໄດ້ເຫັນ [ກ]ບຸດມະນຸດຖືກ
ຍົກຂຶ້ນເທິງ [ຂ]ໄມ້ກາງແຂນ, ຕາມວິທີຂອງ
ມະນຸດ;
56 ແລະ ເພິ່ນໄດ້ຍິນສຽງອັນດັງ; ແລະ
ຟ້າສະຫວັນຖືກມ່ານປິດໄວ້; ແລະ ການ
ສ້າງທັງປວງຂອງພຣະເຈົ້າເປັນທຸກ; ແລະ
ແຜ່ນດິນໂລກ [ກ]ຄວນຄາງ; ແລະ ກ້ອນຫີນ
ແຕກເປັນປ່ຽງໆ; ແລະ ໄພ່ພົນຂອງພຣະ
ເຈົ້າໄດ້ [ຂ]ລຸກຂຶ້ນ, ແລະ ໄດ້ຮັບການ [ຄ]ສວມ
ມົງກຸດຢູ່ທາງ [ງ]ເບື້ອງຂວາພຣະຫັດຂອງບຸດ
ມະນຸດ, ດ້ວຍມົງກຸດແຫ່ງລັດສະໝີພາບ;
57 ແລະ [ກ]ວິນຍານຫລາຍຕໍ່ຫລາຍດວງ
ທີ່ຢູ່ໃນ [ຂ]ຄຸກໄດ້ອອກມາ, ແລະ ຢືນຢູ່ທາງ
ເບື້ອງຂວາພຣະຫັດຂອງພຣະເຈົ້າ; ແລະ
ຜູ້ທີ່ເຫລືອຢູ່ຈະຖືກຈ່ອງຈຳໄວ້ໃນໂສ້ແຫ່ງ
ຄວາມມືດຈົນກວ່າການພິພາກສາແຫ່ງວັນ
ອັນຍິ່ງໃຫຍ່.
58 ແລະ ເອນົກໄດ້ຮ້ອງໄຫ້ອີກ ແລະ ໄດ້
ທູນຕໍ່ພຣະຜູ້ເປັນເຈົ້າ, ໂດຍກ່າວວ່າ: ເມື່ອ
ໃດແຜ່ນດິນໂລກຈະໄດ້ພັກຜ່ອນ?
59 ແລະ ເອນົກໄດ້ເຫັນບຸດມະນຸດສະ
ເດັດຂຶ້ນໄປເຝົ້າພຣະບິດາ; ແລະ ເພິ່ນໄດ້
ທູນຕໍ່ພຣະຜູ້ເປັນເຈົ້າ, ໂດຍກ່າວວ່າ: ພຣະ
ອົງຈະບໍ່ສະເດັດມາຍັງແຜ່ນດິນໂລກອີກ
ບໍ? ໂດຍທີ່ເຫັນວ່າພຣະອົງເປັນພຣະຜູ້
ເປັນເຈົ້າ, ແລະ ຂ້າພຣະອົງຮູ້ຈັກພຣະອົງ,
ແລະ ພຣະອົງໄດ້ສັນຍາກັບຂ້າພຣະອົງ,
ແລະ ໄດ້ບັນຊາຂ້າພຣະອົງວ່າຂ້າພຣະອົງ
ຈະທູນຂໍໃນພຣະນາມຂອງພຣະອົງດຽວທີ່

51 ກ ພສສ 104:6–9.
52 ກ ມຊ 8:2.
53 ກ ຄນພ ພຣະເມຊີອາ.
ຂ ມທ 2:2; 2 ນຟ 10:14; ແອວ 5:50; ຄພ 128:22.
ຄ ພສສ 71:3; 78:35; ຣລມ 5:12. ຄນພ ຫີນ.
ງ 2 ນຟ 31:19–20.
ຈ ຄນພ ດົນຕີ, ເພງ.
55 ກ ຄນພ ບຸດມະນຸດ.
ຂ 3 ນຟ 27:14. ຄນພ ຄຶງ, ການຄຶງ.
56 ກ ມທ 27:45, 50–51.
ຂ ຄນພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
ຄ ຄນພ ສູງສົ່ງ, ຄວາມສູງສົ່ງ; ມົງກຸດ, ສວມມົງກຸດ.
ງ ມທ 25:34.
57 ກ ຄນພ ວິນຍານ.
ຂ ຄພ 76:71–74; 88:99.

ຖືກຳເນີດຂອງພຣະອົງ; ພຣະອົງໄດ້ສ້າງ
ຂ້າພຣະອົງ, ແລະ ໄດ້ປະທານສິດຕໍ່ພຣະ
ບັນລັງຂອງພຣະອົງໃຫ້ແກ່ຂ້າພຣະອົງ,
ແລະ ບໍ່ແມ່ນດ້ວຍຕົວຂອງຂ້າພຣະອົງເອງ,
ແຕ່ໂດຍຜ່ານທາງພຣະຄຸນຂອງພຣະອົງ
ເອງ; ດັ່ງນັ້ນ, ຂ້າພຣະອົງຈຶ່ງທູນຖາມພຣະ
ອົງ ວ່າພຣະອົງຈະສະເດັດມາຍັງແຜ່ນດິນ
ໂລກອີກຫລືບໍ່.
60 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອນົກວ່າ: ເຮົາຍັງມີຊີວິດຢູ່ສັນໃດ, ແມ່ນ
ແຕ່ສັນນັ້ນເຮົາຈະມາໃນ [ກ]ຍຸກສຸດທ້າຍ,
ໃນວັນເວລາຂອງຄວາມຊົ່ວຮ້າຍ ແລະ
ການແກ້ແຄ້ນ, ເພື່ອເຮັດໃຫ້ຄຳສັນຍາທີ່
ເຮົາໄດ້ເຮັດໄວ້ກັບເຈົ້າກ່ຽວກັບລູກຫລານ
ຂອງໂນອາສຳເລັດຄົບຖ້ວນ;
61 ແລະ ວັນນັ້ນຈະມາເຖິງເມື່ອແຜ່ນດິນ
ໂລກຈະ [ກ]ພັກຜ່ອນ, ແຕ່ກ່ອນວັນນັ້ນ ຟ້າ
ສະຫວັນຈະ [ຂ]ມືດດັບ, ແລະ [ຄ]ມ່ານແຫ່ງ
ຄວາມມືດຈະປົກຄຸມແຜ່ນດິນໂລກ; ແລະ
ຟ້າສະຫວັນສັ່ນສະເທືອນ, ແລະ ແຜ່ນດິນ
ໂລກນຳອີກ; ແລະ ຄວາມທຸກຍາກລຳບາກ
ອັນໃຫຍ່ຫລວງຈະມີຢູ່ໃນບັນດາລູກຫລານ
ມະນຸດ, ແຕ່ເຮົາຈະ [ງ]ຮັກສາຜູ້ຄົນຂອງເຮົາ
ໄວ້;
62 ແລະ [ກ]ຄວາມຊອບທຳຈະຖືກສົ່ງ
ລົງມາຈາກສະຫວັນ; ແລະ ເຮົາຈະສົ່ງ
[ຂ]ຄວາມຈິງຂຶ້ນມາຈາກ [ຄ]ແຜ່ນດິນໂລກ,
ເພື່ອເປັນ [ງ]ປະຈັກພະຍານເຖິງພຣະອົງ
ດຽວທີ່ຖືກຳເນີດຂອງເຮົາ; [ຈ]ການຟື້ນຄືນ
ຊີວິດຂອງພຣະອົງຈາກຄວາມຕາຍ; ແທ້
ຈິງແລ້ວ, ແລະ ການຟື້ນຄືນຊີວິດຂອງ
ມະນຸດທຸກຄົນນຳອີກ; ແລະ ເຮົາຈະເຮັດ
ໃຫ້ຄວາມຊອບທຳ ແລະ ຄວາມຈິງກວາດ
ແຜ່ນດິນໂລກດັ່ງນ້ຳຖ້ວມ, ເພື່ອ [ສ]ເຕົ້າ
ໂຮມຜູ້ທີ່ເຮົາເລືອກໄວ້ຈາກສີ່ສ່ວນຂອງ
ແຜ່ນດິນໂລກ, ໄປສູ່ສະຖານທີ່ຊຶ່ງເຮົາຈະ
ຈັດຕຽມໄວ້, ນະຄອນສັກສິດ, ເພື່ອວ່າຜູ້
ຄົນຂອງເຮົາຈະຄາດແອວຂອງພວກເຂົາ,
ແລະ ຄອຍຖ້າເວລາແຫ່ງການສະເດັດ
ມາຂອງເຮົາ; ເພາະວ່າສະຖານທີ່ນະມັດ
ສະການຂອງເຮົາຈະຢູ່ທີ່ນັ້ນ, ແລະ ມັນ
ຈະຖືກເອີ້ນວ່າ ຊີໂອນ, [ຊ]ເຢຣູຊາເລັມ
ໃໝ່.
63 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ເອນົກວ່າ: ຈາກນັ້ນເຈົ້າກັບ [ກ]ເມືອງຂອງ
ເຈົ້າທັງເມືອງຈະພົບພວກເຂົາຢູ່ທີ່ນັ້ນ,
ແລະ ພວກເຮົາຈະຮັບເອົາພວກເຂົາໄວ້ໃນ
ຊວງເອິກຂອງພວກເຮົາ, ແລະ ພວກເຂົາ
ຈະໄດ້ເຫັນພວກເຮົາ; ແລະ ພວກເຮົາຈະ
ໂອບກອດຄໍພວກເຂົາ, ແລະ ພວກເຂົາຈະ
ໂອບກອດຄໍພວກເຮົາ, ແລະ ພວກເຮົາຈະ
ຈູບກັນ;
64 ແລະ ທີ່ປະທັບຂອງເຮົາຈະຢູ່ທີ່ນັ້ນ,
ແລະ ມັນຈະເປັນຊີໂອນ, ຊຶ່ງຈະອອກມາ
ຈາກການສ້າງທັງປວງທີ່ເຮົາໄດ້ສ້າງໄວ້;
ແລະ ແຜ່ນດິນໂລກຈະ [ກ]ພັກຜ່ອນເປັນ
ເວລາ [ຂ]ໜຶ່ງພັນປີ.
65 ແລະ ເຫດການໄດ້ບັງເກີດຂຶ້ນຄື

60 *ກ* ຄມພ ຍຸກສຸດທ້າຍ.
61 *ກ* ຄມພ ແຜ່ນດິນໂລກ—ພາວະສຸດທ້າຍຂອງແຜ່ນດິນໂລກ.
*ຂ* ຄພ 38:11–12; 112:23.
*ຄ* ຄມພ ມ່ານ.
*ງ* 1 ນຟ 22:15–22; 2 ນຟ 30:10.
62 *ກ* ພສສ 85:11. ຄມພ ການຟື້ນຟູພຣະກິດຕິຄຸນ.
*ຂ* ຄມພ ພຣະຄຳພີມໍມອນ.
*ຄ* ອຊຢ 29:4.
*ງ* ຄມພ ປະຈັກພະຍານ.
*ຈ* ຄມພ ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.
*ສ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
*ຊ* ຄມພ ເຢຣູຊາເລັມໃໝ່.
63 *ກ* ພນມ 21:9–11; ຄພ 45:11–12; ມຊ 7:19–21.
64 *ກ* ມຊ 7:48.
*ຂ* ຄມພ ພັນປີ.

ເອນົກ ໄດ້ ເຫັນ ວັນ ເວລາ ແຫ່ງ [ກ]ການ ສະເດັດມາຂອງບຸດມະນຸດ, ໃນຍຸກສຸດທ້າຍ, ເພື່ອປະທັບຢູ່ເທິງແຜ່ນດິນໂລກໃນຄວາມຊອບທຳເປັນເວລາໜຶ່ງພັນປີ;

66 ແຕ່ກ່ອນວັນນັ້ນ ເພິ່ນໄດ້ເຫັນຄວາມທຸກຍາກລຳບາກອັນໃຫຍ່ຫລວງໃນບັນດາຄົນຊົ່ວ; ແລະ ເພິ່ນກໍໄດ້ເຫັນທະເລນຳອີກ, ວ່າມັນປັ່ນປ່ວນ, ແລະ ຫົວໃຈຂອງມະນຸດ [ກ]ທໍ້ຖອຍ, ຄອຍຖ້າ [ຂ]ການພິພາກສາຂອງຜູ້ຊົງລິດອຳນາດຍິ່ງໃຫຍ່ດ້ວຍຄວາມຢ້ານກົວ, ຊຶ່ງຈະມາເຖິງຄົນຊົ່ວ.

67 ແລະ ພຣະຜູ້ເປັນເຈົ້າໄດ້ສະແດງທຸກສິ່ງທັງປວງໃຫ້ເອນົກເຫັນ, ແມ່ນແຕ່ຈົນເຖິງຄາວສິ້ນສຸດໂລກ; ແລະ ເພິ່ນໄດ້ເຫັນວັນຂອງຄົນຊອບທຳ, ຊົ່ວໂມງແຫ່ງການໄຖ່ຂອງພວກເຂົາ, ແລະ ໄດ້ຮັບຄວາມສົມບູນແຫ່ງ [ກ]ຄວາມຊື່ນຊົມ;

68 ແລະ ວັນເວລາທັງໝົດຂອງ [ກ]ຊີໂອນ, ໃນວັນເວລາຂອງເອນົກ, ຄືສາມຮ້ອຍຫົກສິບຫ້າປີ.

69 ແລະ ເອນົກ ແລະ ຜູ້ຄົນທັງປວງຂອງເພິ່ນໄດ້ [ກ]ເດີນໄປກັບພຣະເຈົ້າ, ແລະ ພຣະອົງ ໄດ້ ສະ ຖິດຢູ່ທ່າມ ກາງ ຊີໂອນ; ແລະ ເຫດການໄດ້ບັງເກີດຂຶ້ນຄື ຊີໂອນບໍ່ມີແລ້ວ, ເພາະວ່າພຣະເຈົ້າໄດ້ຮັບເອົາມັນໄປໄວ້ໃນຊວງເອິກຂອງພຣະອົງເອງ; ແລະ ນັບແຕ່ນັ້ນມາ ມີການກ່າວວ່າ, ຊີໂອນຫລົບໜີໄປແລ້ວ.

## ບົດທີ 8

(ເດືອນກຸມພາ 1831)

*ເມທູເຊລາທຳນາຍ— ໂນອາ ແລະ ພວກລູກຊາຍຂອງເພິ່ນສັ່ງສອນພຣະກິດຕິຄຸນ—ຄວາມຊົ່ວຮ້າຍອັນໃຫຍ່ຫລວງແຜ່ຂະຫຍາຍອອກໄປ—ການເອີ້ນໃຫ້ກັບໃຈຖືກເມີນເສີຍ—ພຣະເຈົ້າອອກຄຳສັ່ງໃຫ້ຄວາມພິນາດມາສູ່ເນື້ອໜັງທັງປວງໂດຍນ້ຳຖ້ວມ.*

1 ແລະ ວັນເວລາທັງໝົດຂອງເອນົກຄືສີ່ຮ້ອຍສາມສິບປີ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື [ກ]ເມທູເຊລາ, ລູກຊາຍຂອງເອນົກ, ບໍ່ໄດ້ຖືກຮັບໄປ, ວ່າພັນທະສັນຍາ ຂອງພຣະຜູ້ເປັນເຈົ້າຈະສຳເລັດຄົບຖ້ວນ, ຊຶ່ງພຣະອົງໄດ້ເຮັດໄວ້ກັບເອນົກ; ເພາະວ່າພຣະອົງໄດ້ເຮັດພັນທະສັນຍາກັບເອນົກຢ່າງແທ້ຈິງວ່າໂນອາຈະມາຈາກຜົນແອວຂອງເພິ່ນ.

3 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມທູເຊລາໄດ້ທຳນາຍວ່າ ຈາກຜົນແອວຂອງລາວອານາຈັກຂອງແຜ່ນດິນໂລກ (ຜ່ານທາງໂນອາ) ຈະເກີດຂຶ້ນ, ແລະ ລາວຮັບຄຳຍ້ອງຍໍສັນລະເສີນໄວ້ກັບຕົນເອງ.

4 ແລະ ຄວາມອຶດຢາກອັນໃຫຍ່ຫລວງໄດ້ເກີດຂຶ້ນໃນແຜ່ນດິນ, ແລະ ພຣະຜູ້ເປັນເຈົ້າໄດ້ສາບແຊ່ງແຜ່ນດິນໂລກດ້ວຍການສາບແຊ່ງຢ່າງສາຫັດ, ແລະ ຜູ້ອາໄສຢູ່ໃນນັ້ນຕາຍໄປຢ່າງຫລວງຫລາຍ.

5 ແລະ ເຫດການໄດ້ບັງເກີດຂຶ້ນຄື ເມທູເຊລາມີອາຍຸໄດ້ໜຶ່ງຮ້ອຍແປດສິບເຈັດປີ, ແລະ ໄດ້ລູກຊາຍຊື່ລາເມັກ;

6 ແລະ ເມທູເຊລາໄດ້ມີຊີວິດຢູ່, ຫລັງຈາກລາວໄດ້ລາເມັກ, ເຈັດຮ້ອຍແປດສິບສອງປີ, ແລະ ໄດ້ມີລູກຊາຍ ແລະ ລູກສາວອີກຫລາຍຄົນ;

---

65 *ກ* ຢດ 1:14.
ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
66 *ກ* ອຊຢ 13:6–7.
*ຂ* ຄມພ ພິພາກສາ, ການພິພາກສາຄັ້ງສຸດທ້າຍ.
67 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
68 *ກ* ປຖກ 5:23; ມຊ 8:1.
69 *ກ* ປຖກ 5:24; ມຊ 6:34.
ຄມພ ເດີນ, ເດີນໄປກັບພຣະເຈົ້າ.
**8** 2 *ກ* ຄມພ ເມທູເຊລາ.

7 ແລະ ວັນເວລາທັງໝົດຂອງເມທູເຊລາ ຄືເກົ້າຮ້ອຍຫົກສິບເກົ້າປີ, ແລະ ລາວໄດ້ຕາຍໄປ.

8 ແລະ ລາເມັກມີອາຍຸໄດ້ໜຶ່ງຮ້ອຍແປດສິບສອງປີ, ແລະ ໄດ້ມີລູກຊາຍຄົນໜຶ່ງ,

9 ແລະ ລາວເອີ້ນຊື່ຂອງລາວວ່າ [ກ]ໂນອາ, ໂດຍ ກ່າວ ວ່າ: ລູກຄົນ ນີ້ ຈະ ປອບ ໂຍນ ພວກເຮົາກ່ຽວກັບວຽກງານຂອງພວກເຂົາ ແລະ ຄວາມລຳບາກຂອງມືຂອງພວກເຮົາ, ເນື່ອງດ້ວຍພື້ນດິນຊຶ່ງພຣະຜູ້ເປັນເຈົ້າໄດ້ [ຂ]ສາບແຊ່ງ.

10 ແລະ ລາ ເມັກ ໄດ້ ມີ ຊີ ວິດ ຢູ່, ຫລັງ ຈາກລາວໄດ້ໂນອາ, ຫ້າຮ້ອຍເກົ້າສິບຫ້າປີ, ແລະ ໄດ້ມີລູກຊາຍ ແລະ ລູກສາວອີກຫລາຍຄົນ;

11 ແລະ ວັນເວລາທັງໝົດຂອງລາເມັກ ຄືເຈັດຮ້ອຍເຈັດສິບເຈັດປີ, ແລະ ລາວໄດ້ຕາຍໄປ.

12 ແລະ ໂນອາມີອາຍຸໄດ້ສີ່ຮ້ອຍຫ້າສິບປີ, ແລະ [ກ]ໄດ້ລູກຊື່ຢາເຟດ; ແລະ ສີ່ສິບສອງປີຈາກນັ້ນລາວໄດ້ລູກຊື່ [ຂ]ເຊມຈາກນາງຜູ້ເປັນແມ່ຂອງຢາເຟດ, ແລະ ເມື່ອລາວມີອາຍຸໄດ້ຫ້າຮ້ອຍປີ ລາວໄດ້ລູກຊື່ວ່າ [ຄ]ຮາມ.

13 ແລະ [ກ]ໂນອາກັບພວກລູກຊາຍຂອງເພິ່ນໄດ້ [ຂ]ເຊື່ອຟັງພຣະຜູ້ເປັນ ເຈົ້າ, ແລະ ໄດ້ເອົາໃຈໃສ່, ແລະ ເຂົາເຈົ້າໄດ້ຖືກເອີ້ນວ່າ [ຄ]ບຸດຂອງພຣະເຈົ້າ.

14 ແລະ ເມື່ອຜູ້ຄົນເລີ່ມທະວີຫລາຍຂຶ້ນຢູ່ເທິງພື້ນແຜ່ນດິນໂລກ, ແລະ ບັນດາລູກສາວໄດ້ເກີດກັບພວກເຂົາ, ພວກ [ກ]ລູກຊາຍຂອງມະນຸດຈຶ່ງເຫັນວ່າບັນດາລູກສາວເຫລົ່ານັ້ນເປັນຄົນງົດງາມ, ແລະ ພວກເຂົາກໍໄດ້ເອົາພວກນາງມາເປັນເມຍ, ແມ່ນແຕ່ຕາມທີ່ພວກເຂົາຈະເລືອກ.

15 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບໂນອາວ່າ: ບັນດາລູກສາວຂອງພວກລູກຊາຍຂອງເຈົ້າໄດ້ [ກ]ຂາຍຕົນເອງ; ເພາະຈົ່ງເບິ່ງ ຄວາມຄຽດແຄ້ນຂອງເຮົາໄດ້ເກີດກັບພວກລູກຊາຍຂອງມະນຸດ, ເພາະວ່າພວກເຂົາບໍ່ໄດ້ເຊື່ອຟັງສຽງຂອງເຮົາ.

16 ແລະ ເຫດການໄດ້ບັງເກີດຂຶ້ນຄືໂນອາໄດ້ທຳນາຍ, ແລະ ໄດ້ສິດສອນເລື່ອງຂອງພຣະເຈົ້າ, ແມ່ນແຕ່ໄດ້ເປັນມານັບແຕ່ຕອນຕົ້ນ.

17 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບໂນອາວ່າ: ວິນຍານຂອງເຮົາຈະບໍ່ [ກ]ພະຍາຍາມກັບມະນຸດຕະຫລອດໄປ, ເພາະເຂົາຮູ້ວ່າ [ຂ]ເນື້ອໜັງທັງປວງຈະຕາຍ; ແຕ່ວັນເວລາຂອງເຂົາຈະເປັນໜຶ່ງຮ້ອຍຊາວປີ; ແລະ ຖ້າຫາກມະນຸດບໍ່ກັບໃຈ, ແລ້ວເຮົາຈະສົ່ງ [ຄ]ນ້ຳຖ້ວມມາຍັງພວກເຂົາ.

18 ແລະ ໃນວັນເວລາເຫລົ່ານັ້ນ ໄດ້ມີ [ກ]ຍັກຢູ່ເທິງແຜ່ນດິນໂລກ, ແລະ ພວກເຂົາໄດ້ຊອກຫາໂນອາເພື່ອຈະເອົາຊີວິດຂອງເພິ່ນ; ແຕ່ວ່າພຣະຜູ້ເປັນເຈົ້າໄດ້ຢູ່ກັບໂນອາ, ແລະ [ຂ]ອຳນາດຂອງພຣະຜູ້ເປັນເຈົ້າໄດ້ຢູ່ກັບເພິ່ນ.

9 *ກ* ຄມພ ໂນອາ, ປີຕຸໃນພຣະຄຣິສຕະທຳຄຳພີ.
*ຂ* ມຊ 4:23.
12 *ກ* ປຖກ 5:32. ຄມພ ຢາເຟດ.
*ຂ* ຄມພ ເຊມ.
*ຄ* ຄມພ ຮາມ.
13 *ກ* ຄພ 138:41. ຄມພ ຄັບຣິເອນ.
*ຂ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
*ຄ* ຄມພ ບຸດ ແລະ ທິດາຂອງພຣະເຈົ້າ.
14 *ກ* ມຊ 5:52.
15 *ກ* ຄມພ ແຕ່ງງານ, ການແຕ່ງງານ—ການແຕ່ງງານກັບຄົນຕ່າງສາດສະໜາ.
17 *ກ* ປຖກ 6:3; 2 ນຟ 26:11; ອທ 2:15; ຄພ 1:33.
*ຂ* 2 ນຟ 9:4. ຄມພ ເນື້ອໜັງ.
*ຄ* ປຖກ 7:4, 10; ມຊ 7:34.
18 *ກ* ປຖກ 6:4; ຈບຊ 13:33; ຢຊ 17:15.
*ຂ* ຄມພ ອຳນາດ.

19 ແລະ ພຣະຜູ້ເປັນເຈົ້າໄດ້ [ກ]ແຕ່ງຕັ້ງ [ຂ]ໂນອາຕາມ [ຄ]ລະບຽບຂອງພຣະອົງເອງ, ແລະ ໄດ້ບັນຊາເພິ່ນໃຫ້ອອກໄປ [ງ]ປະກາດພຣະກິດຕິຄຸນຂອງພຣະອົງແກ່ລູກຫລານມະນຸດ, ແມ່ນແຕ່ດັ່ງທີ່ໄດ້ຖືກມອບໃຫ້ແກ່ເອນົກ.

20 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂນອາໄດ້ເອີ້ນຫາລູກຫລານມະນຸດໃຫ້ [ກ]ກັບໃຈ; ແຕ່ພວກເຂົາບໍ່ໄດ້ເຊື່ອຟັງຖ້ອຍຄຳຂອງເພິ່ນ;

21 ແລະ ພ້ອມນີ້, ຫລັງຈາກທີ່ພວກເຂົາໄດ້ຍິນເພິ່ນ, ພວກເຂົາໄດ້ມາຫາເພິ່ນ, ໂດຍກ່າວວ່າ: ຈົ່ງເບິ່ງ, ພວກເຮົາເປັນບຸດຂອງພຣະເຈົ້າ; ພວກເຮົາບໍ່ໄດ້ຮັບເອົາລູກສາວຂອງມະນຸດມາໃຫ້ຕົນເອງບໍ? ແລະ ພວກເຮົາບໍ່ໄດ້ [ກ]ກິນ ແລະ ດື່ມ, ແລະ ແຕ່ງງານ ແລະ ຍົກໃຫ້ແຕ່ງງານກັນບໍ? ແລະ ເມຍຂອງພວກເຮົາໄດ້ຄອດລູກໃຫ້ພວກເຮົາ, ແລະ ຄົນເຫລົ່ານີ້ເປັນຄົນຍິ່ງໃຫຍ່, ຊຶ່ງເປັນເໝືອນຄົນໃນສະໄໝບູຮານ, ເປັນຄົນມີຊື່ສຽງແທ້ໆ. ແລະ ພວກເຂົາບໍ່ໄດ້ເຊື່ອຟັງຖ້ອຍຄຳຂອງໂນອາ.

22 ແລະ ພຣະເຈົ້າໄດ້ເຫັນວ່າ [ກ]ຄວາມຊົ່ວຮ້າຍຂອງມະນຸດເລີ່ມຮ້າຍແຮງຫລາຍຂຶ້ນໃນແຜ່ນດິນໂລກ; ແລະ ທຸກຄົນໄດ້ຍົກຕົວຂຶ້ນໃນຄວາມຄິດຝັນຂອງ [ຂ]ຄວາມນຶກຄິດໃນໃຈຂອງຕົນ, ໂດຍມີແຕ່ຄວາມຊົ່ວຕະຫລອດເວລາ.

23 ແລະ ເຫດການໄດ້ບັງເກີດຂຶ້ນຄື ໂນອາໄດ້ [ກ]ສັ່ງສອນຜູ້ຄົນຕໍ່ໄປ, ໂດຍກ່າວວ່າ: ຈົ່ງເຊື່ອຟັງ, ແລະ ເອົາໃຈໃສ່ຕໍ່ຖ້ອຍຄຳຂອງເຮົາ;

24 ຈົ່ງ [ກ]ເຊື່ອ ແລະ ກັບໃຈຈາກບາບຂອງພວກເຈົ້າ ແລະ ຮັບ [ຂ]ບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ, ແມ່ນແຕ່ດັ່ງບັນພະບຸລຸດຂອງພວກເຮົາ, ແລະ ພວກເຈົ້າຈະໄດ້ຮັບພຣະວິນຍານບໍລິສຸດ, ເພື່ອວ່າທຸກສິ່ງທັງປວງຈະຖືກ [ຄ]ສະແດງໃຫ້ປະຈັກແກ່ພວກເຈົ້າ; ແລະ ຖ້າຫາກພວກເຈົ້າບໍ່ເຮັດເຊັ່ນນີ້, ນ້ຳຖ້ວມຈະມາຍັງພວກເຈົ້າ; ເຖິງຢ່າງໃດກໍຕາມ ພວກເຂົາບໍ່ໄດ້ເຊື່ອຟັງ.

25 ແລະ ເລື່ອງນີ້ໄດ້ເຮັດໃຫ້ໂນອາເສຍໃຈ, ແລະ ໃຈຂອງເພິ່ນເຈັບປວດທີ່ພຣະຜູ້ເປັນເຈົ້າໄດ້ສ້າງມະນຸດໄວ້ເທິງແຜ່ນດິນໂລກ, ແລະ ມັນເຮັດໃຫ້ເພິ່ນເສົ້າສະຫລົດໃຈ.

26 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ເຮົາຈະ [ກ]ທຳລາຍມະນຸດທີ່ເຮົາໄດ້ສ້າງຂຶ້ນມາ, ຈາກພື້ນແຜ່ນດິນໂລກ, ທັງມະນຸດ ແລະ ສັດສາວາສິ່ງ, ແລະ ສັດເລືອຄານ, ແລະ ຝູງນົກໃນອາກາດ; ເພາະວ່າມັນໄດ້ເຮັດໃຫ້ໂນອາເສຍໃຈທີ່ເຮົາໄດ້ສ້າງມັນຂຶ້ນມາ, ແລະ ທີ່ເຮົາໄດ້ເຮັດມັນຂຶ້ນມາ; ແລະ ລາວໄດ້ເອີ້ນຫາເຮົາ; ເພາະວ່າພວກເຂົາໄດ້ພະຍາຍາມທີ່ຈະເອົາຊີວິດຂອງລາວ.

27 ແລະ ໂນອາໄດ້ພົບ [ກ]ພຣະຄຸນໃນ

---

19 ກ ຄພ 107:52. ຄມພ ແຕ່ງຕັ້ງ, ການແຕ່ງຕັ້ງ.
ຂ ອຣຣ 1:19.
ຄ ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
ງ ຄມພ ວຽກງານເຜີຍແຜ່.
20 ກ ຄມພ ກັບໃຈ, ການກັບໃຈ.
21 ກ ມທ 24:38–39; ຈສ—ມ 1:41.
22 ກ ປຖກ 6:5; ມຊ 7:36–37.
ຂ ມຊຍ 4:30; ແອວ 12:14. ຄມພ ຄວາມຄິດ.
23 ກ ຄມພ ສັ່ງສອນ.
24 ກ ຄມພ ເຊື່ອ, ຄວາມເຊື່ອ.
ຂ ຄມພ ບັບຕິສະມາ, ໃຫ້ບັບຕິສະມາ—ເງື່ອນໄຂສຳລັບການບັບຕິສະມາ.
ຄ 2 ນຟ 32:2–5.
26 ກ ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
27 ກ ຄມພ ພຣະຄຸນ.

ສາຍ ພຣະ ເນດ ຂອງ ພຣະ ຜູ້ ເປັນ ເຈົ້າ ດັ່ງ
ນັ້ນ; ເພາະວ່າໂນອາເປັນຄົນທ່ຽງທຳ, ແລະ
[ຂ]ດີພ້ອມໃນລຸ້ນຂອງເພິ່ນ; ແລະ ເພິ່ນໄດ້
[ຄ]ເດີນໄປກັບພຣະເຈົ້າ, ດັ່ງທີ່ພວກລູກຊາຍ
ຂອງເພິ່ນ, ເຊມ, ຮາມ, ແລະ ຢາເຟດ.
28 ແຜ່ນດິນໂລກໄດ້ [ກ]ເສື່ອມໂຊມລົງຢູ່ຕໍ່
ພຣະພັກຂອງພຣະເຈົ້າ, ແລະ ມັນເຕັມໄປ
ດ້ວຍຄວາມຮຸນແຮງ.
29 ແລະ ພຣະເຈົ້າເບິ່ງ ແຜ່ນດິນໂລກ,
ແລະ, ຈົ່ງ ເບິ່ງ, ມັນ ໄດ້ ເສື່ອມ ໂຊມ ລົງ,
ເພາະ ວ່າ ເນື້ອ ໜັງທັງປວງໄດ້ເສື່ອມໂຊມ
ລົງເທິງແຜ່ນດິນໂລກ.
30 ແລະ ພຣະເຈົ້າໄດ້ກ່າວກັບໂນອາວ່າ:
ທີ່ສຸດຂອງເນື້ອໜັງທັງປວງໄດ້ມາຢູ່ຕໍ່ໜ້າ
ເຮົາ, ເພາະວ່າແຜ່ນດິນໂລກເຕັມໄປດ້ວຍ
ຄວາມຮຸນແຮງ, ແລະ ຈົ່ງເບິ່ງ ເຮົາຈະ [ກ]ທຳ
ລາຍເນື້ອໜັງທັງປວງຈາກແຜ່ນດິນໂລກ.

---

27 *ຂ* ປຖກ 6:9.
*ຄ* ຄມພ ເດີນ, ເດີນໄປ
ກັບພຣະເຈົ້າ.
28 *ກ* ປຖກ 6:11–13.
30 *ກ* ຄພ 56:3.

# ສຳເນົາຈາກໜັງສືອັບຣາຮາມ

## ເລກທີ 1




## ຄຳອະທິບາຍ

ຮູບທີ 1. ທູດຂອງພຣະຜູ້ເປັນເຈົ້າ.

ຮູບທີ 2. ອັບຣາຮາມຖືກມັດຢູ່ເທິງແທ່ນບູຊາ.

ຮູບທີ 3. ປະໂລຫິດຂອງເອເຄນາຜູ້ນະມັດສະການຮູບບູຊາພະຍາຍາມຖວາຍອັບຣາຮາມເປັນເຄື່ອງບູຊາ.

ຮູບທີ 4. ແທ່ນບູຊາຊຶ່ງປະໂລຫິດຜູ້ນະມັດສະການຮູບບູຊາໃຊ້ເຮັດພິທີຖວາຍເຄື່ອງບູຊາ, ໂດຍຕັ້ງຢູ່ທາງໜ້າພຣະເຈົ້າຂອງເອເຄນາ, ລິບນາ, ມາມັກຄຣາ, ໂຄແຣສ໌, ແລະ ຟາຣາໂອ.

ຮູບທີ 5. ພຣະເຈົ້າຂອງເອເຄນາທີ່ເປັນຮູບບູຊາ.

ຮູບທີ 6. ພຣະເຈົ້າຂອງລິບນາທີ່ເປັນຮູບບູຊາ.

ຮູບທີ 7. ພຣະເຈົ້າຂອງມາມັກຄຣາທີ່ເປັນຮູບບູຊາ.

ຮູບທີ 8. ພຣະເຈົ້າຂອງໂຄແຣສ໌ທີ່ເປັນຮູບບູຊາ.

ຮູບທີ 9. ພຣະເຈົ້າຂອງຟາຣາໂອທີ່ເປັນຮູບບູຊາ.

ຮູບທີ 10. ອັບຣາຮາມໃນເອຢິບ.

ຮູບທີ 11. ມຸ້ງໝາຍເພື່ອສະແດງໃຫ້ເຫັນເສົາຫລັກຂອງຟ້າສະຫວັນ, ຕາມຄວາມເຂົ້າໃຈຂອງຊາວເອຢິບ.

ຮູບທີ 12. ຣໍຄີຢາງ, ໝາຍເຖິງຄວາມກວ້າງໃຫຍ່ໄພສານ, ຫລື ທ້ອງນະພາຢູ່ເທິງຫົວຂອງເຮົາ; ແຕ່ໃນກໍລະນີນີ້, ໃນຄວາມສຳພັນກ່ຽວກັບຮູບພາບນີ້, ຊາວເອຢິບໝາຍເຖິງຊໍມໍ, ຢູ່ສະຖານທີ່ສູງ, ຫລື ຟ້າສະຫວັນ, ກົງກັນກັບຄຳເຮັບເຣີທີ່ວ່າ ຊໍມາຢິມ.

# ໜັງສືອັບຣາຮາມ

**ແປຈາກແຜ່ນໃບລານພະພາຍຣັສ, ໂດຍໂຈເຊັບ ສະມິດ**

*ການແປບັນທຶກບູຮານບາງສ່ວນທີ່ຕົກຢູ່ໃນມືຂອງພວກເຮົາທີ່ໄດ້ມາຈາກຫ້ອງຝັງສົບໃຕ້ດິນຂອງເອຢິບ. ການຂຽນຂອງອັບຣາຮາມໃນຂະນະທີ່ເພິ່ນຢູ່ໃນເອຢິບ, ຖືກເອີ້ນວ່າໜັງສືອັບຣາຮາມ, ຂຽນໂດຍມືຂອງເພິ່ນເອງ, ຢູ່ໃນແຜ່ນໃບລານພະພາຍຣັສ.*

## ບົດທີ 1

*ອັບຣາຮາມສະແຫວງຫາພອນຂອງລະບຽບແຫ່ງປິຕຸ— ເພິ່ນຖືກປະໂລຫິດປອມແຫ່ງເຄນເດຍຂົ່ມເຫັງ—ພຣະເຢໂຮວາຊ່ວຍເພິ່ນໃຫ້ລອດ—ຕົ້ນກຳເນີດ ແລະ ການປົກຄອງຂອງເອຢິບຖືກອະທິບາຍ.*

1 ໃນແຜ່ນດິນຂອງຊາວ [ກ]ເຄນເດຍ, ໃນ
ຖິ່ນຖານຂອງບັນພະບຸລຸດຂອງຂ້າພະເຈົ້າ,
ຂ້າພະເຈົ້າ, [ຂ]ອັບຣາຮາມ, ເຫັນໄດ້ວ່າຈຳ
ເປັນສຳລັບຂ້າພະເຈົ້າທີ່ຈະຫາ [ຄ]ຖິ່ນຖານ
ໃໝ່;
2 ແລະ, ໂດຍ ທີ່ ພົບ ວ່າ ມີ [ກ]ຄວາມ ສຸກ
ແລະ ຄວາມ ສະຫງົບ ແລະ [ຂ]ການ ພັກ
ຜ່ອນຫລາຍຂຶ້ນສຳລັບຂ້າພະເຈົ້າ, ຂ້າພະ
ເຈົ້າຈຶ່ງໄດ້ສະແຫວງຫາພອນຂອງບັນພະ
ບຸລຸດ, ແລະ ສິດທິຊຶ່ງຂ້າພະເຈົ້າຄວນຈະ
ໄດ້ຮັບການແຕ່ງຕັ້ງເພື່ອປະຕິບັດພອນດັ່ງ
ກ່າວ; ໂດຍທີ່ຂ້າພະເຈົ້າເປັນຜູ້ຕິດຕາມ
[ຄ]ຄວາມຊອບທຳ, ປາດຖະໜາເປັນຜູ້ໜຶ່ງ
ທີ່ມີ [ງ]ຄວາມຮູ້ຫລາຍນຳອີກ, ແລະ ເປັນຜູ້
ຕິດຕາມຄວາມຊອບທຳຫລາຍຂຶ້ນ, ແລະ
ໄດ້ຮັບຄວາມຮູ້ຫລາຍຂຶ້ນ, ແລະ ເປັນບິດາ
ຂອງຫລາຍປະຊາຊາດ, ເປັນເຈົ້າສັນຕິ
ລາດ, ແລະ ປາດຖະໜາທີ່ຈະໄດ້ຮັບຄຳ
ແນະນຳ, ແລະ ຮັກສາພຣະບັນຍັດຂອງ
ພຣະເຈົ້າ, ຂ້າພະເຈົ້າໄດ້ກາຍເປັນຜູ້ຮັບ
ມູນມໍລະດົກທີ່ຖືກຕ້ອງ, [ຈ]ມະຫາປະໂລຫິດ,
ໂດຍຖື [ສ]ສິດຊຶ່ງເປັນຂອງບັນພະບຸລຸດ.
3 ມັນໄດ້ຖືກ [ກ]ມອບໃຫ້ຂ້າພະເຈົ້າຈາກ
ບັນພະບຸລຸດ; ສືບທອດມາຈາກບັນພະບຸ
ລຸດ, ຕັ້ງແຕ່ຕົ້ນຂອງເວລາ, ແທ້ຈິງແລ້ວ,
ແມ່ນແຕ່ຕັ້ງແຕ່ຕົ້ນ, ຫລື ກ່ອນການວາງ
ຮາກຖານຂອງແຜ່ນດິນໂລກ, ລົງມາເຖິງ
ເວລາປະຈຸບັນ, ແມ່ນແຕ່ສິດຂອງ [ຂ]ລູກກົກ,
ຫລື ມະນຸດຄົນທຳອິດ, ຜູ້ຄື [ຄ]ອາດາມ, ຫລື
ບິດາຄົນທຳອິດ, ຜ່ານທາງບັນພະບຸລຸດຈົນ
ເຖິງຂ້າພະເຈົ້າ.
4 ຂ້າ ພະ ເຈົ້າ ໄດ້ ສະແຫວງ ຫາ [ກ]ການ
ມອບ ໝາຍ ສູ່ຖານະປະໂລຫິດຕາມການ
ມອບໝາຍຂອງພຣະເຈົ້າໃຫ້ແກ່ບັນພະບຸ
ລຸດກ່ຽວກັບເຊື້ອສາຍ.
5 [ກ]ບັນພະບຸລຸດຂອງຂ້າພະເຈົ້າ, ໂດຍທີ່
ຫັນໜີໄປຈາກຄວາມຊອບທຳ, ແລະ ຈາກ

---

**1** 1 *ກ* ຄມພ ອູເຣ.
*ຂ* ຄມພ ອັບຣາຮາມ.
*ຄ* ກຈກ 7:2–4.
2 *ກ* ຄມພ ຊື່ນຊົມ, ຄວາມຊື່ນຊົມ.
*ຂ* ຄມພ ພັກຜ່ອນ.
*ຄ* ຄມພ ຊອບທຳ, ຄວາມຊອບທຳ.
*ງ* ຄພ 42:61. ຄມພ ຄວາມຮູ້.
*ຈ* ຄມພ ມະຫາປະໂລຫິດ.
*ສ* ຄມພ ຖານະປະໂລຫິດແຫ່ງເມນຄິເສເດັກ.
3 *ກ* ຄພ 84:14.
*ຂ* ຄພ 68:17. ຄມພ ລູກກົກ.
*ຄ* ມຊ 1:34. ຄມພ ອາດາມ.
4 *ກ* ຄມພ ສິດທິຂອງອ້າຍກົກ.
5 *ກ* ປຖກ 12:1.

ພຣະບັນຍັດທີ່ສັກສິດ ຊຶ່ງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຂົາໄດ້ມອບ
ໃຫ້ແກ່ພວກເຂົາ, ກັບໄປ [ຂ]ນະມັດສະການ
ພຣະເຈົ້າຂອງຄົນນອກສາດສະໜາ, ໄດ້
ປະຕິເສດຢ່າງເດັດຂາດທີ່ຈະເຊື່ອຟັງສຽງ
ຂອງຂ້າພະເຈົ້າ;
6 ເພາະວ່າຫົວໃຈຂອງພວກເຂົາຕັ້ງໃຈທີ່
ຈະເຮັດຄວາມຊົ່ວ, ແລະ ຫັນໄປສູ່ [ກ]ພຣະ
ເຈົ້າຂອງເອເຄນາ, ແລະ ພຣະເຈົ້າຂອງລິບ
ນາ, ແລະ ພຣະເຈົ້າຂອງມາມັກຄຣາ, ແລະ
ພຣະເຈົ້າຂອງໂຄແຣສ໌, ແລະ ພຣະເຈົ້າ
ຂອງຟາຣາໂອ, ກະສັດແຫ່ງເອຢິບຈົນໝົດ;
7 ສະນັ້ນ ພວກເຂົາໄດ້ຫັນໃຈຂອງຕົນ
ໄປສູ່ການຖວາຍເຄື່ອງບູຊາຂອງຄົນນອກ
ສາດສະໜາໃນການຖວາຍລູກຫລານຂອງ
ພວກເຂົາໃຫ້ແກ່ຮູບບູຊາທີ່ເວົ້າບໍ່ໄດ້, ແລະ
ບໍ່ເຊື່ອຟັງສຽງຂອງຂ້າພະເຈົ້າ, ແຕ່ພະຍາ
ຍາມເອົາຊີວິດຂອງຂ້າພະເຈົ້າໂດຍມືຂອງ
ປະໂລຫິດຂອງເອເຄນາ. ປະໂລຫິດຂອງ
ເອເຄນາກໍເປັນປະໂລຫິດຂອງຟາຣາໂອຄື
ກັນ.
8 ບັດນີ້, ໃນເວລານີ້ ເປັນປະເພນີຂອງ
ປະໂລຫິດຂອງຟາຣາໂອ, ກະສັດແຫ່ງ
ເອຢິບ, ທີ່ຈະຖວາຍຢູ່ເທິງແທ່ນບູຊາ ຊຶ່ງ
ໄດ້ສ້າງຢູ່ໃນແຜ່ນດິນຂອງເຄນເດຍ, ເພື່ອ
ຖວາຍຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍໃຫ້
ແກ່ພຣະເຈົ້າຈາກຕ່າງແດນເຫລົ່ານີ້.
9 ແລະ ເຫດການໄດ້ບັງເກີດຂຶ້ນຄື ປະ
ໂລຫິດໄດ້ຖວາຍໃຫ້ແກ່ພຣະເຈົ້າຂອງຟາ
ຣາໂອ, ແລະ ໃຫ້ແກ່ພຣະເຈົ້າຂອງຊາກະຣິ
ນຳອີກ, ແມ່ນແຕ່ຕາມວິທີຂອງຊາວເອຢິບ.
ບັດນີ້ ພຣະເຈົ້າຂອງຊາກະຣິຄືດວງຕາ
ເວັນ.
10 ແມ່ນແຕ່ການຖວາຍຂອບພຣະໄທ
ດ້ວຍເດັກ ປະໂລຫິດຂອງຟາຣາໂອກໍໄດ້
ຖວາຍຢູ່ເທິງແທ່ນບູຊາ ຊຶ່ງຕັ້ງຢູ່ໃນພູທີ່
ເອີ້ນວ່າ ໃນພູໂປຕິຟາ, ຢູ່ຕົ້ນທົ່ງພຽງໂອ
ລິເຊມ.
11 ບັດນີ້, ປະໂລຫິດຄົນນີ້ໄດ້ຖວາຍຜູ້
ຍິງບໍລິສຸດສາມຄົນພ້ອມກັນຢູ່ເທິງແທ່ນ
ບູຊາ, ຜູ້ເປັນລູກສາວຂອງໂອນິທາ, ຜູ້ເປັນ
ເຊື້ອສາຍຈາກຜົນແອວຂອງ [ກ]ຮາມ. ຜູ້ຍິງ
ບໍລິສຸດເຫລົ່ານີ້ໄດ້ຖືກຖວາຍເພາະຄຸນນະ
ທຳຂອງພວກນາງ; ພວກນາງບໍ່ໄດ້ [ຂ]ກົ້ມ
ຂາບລົງນະມັດສະການພຣະເຈົ້າທີ່ເປັນ
ໄມ້ ຫລື ຫີນ, ສະນັ້ນ ພວກນາງຈຶ່ງຖືກຂ້າຢູ່
ເທິງແທ່ນບູຊາ, ແລະ ເປັນໄປຕາມວິທີຂອງ
ຊາວເອຢິບ.
12 ແລະ ເຫດການໄດ້ບັງເກີດຂຶ້ນຄື ປະ
ໂລຫິດໄດ້ເຮັດຄວາມຮຸນແຮງກັບຂ້າພະ
ເຈົ້າ, ເພື່ອວ່າພວກເຂົາຈະໄດ້ຂ້າຂ້າພະ
ເຈົ້າຄືກັນ, ດັ່ງທີ່ພວກເຂົາໄດ້ເຮັດກັບພວກ
ຜູ້ຍິງບໍລິສຸດເຫລົ່ານັ້ນຢູ່ເທິງແທ່ນບູຊາ;
ແລະ ເພື່ອວ່າທ່ານຈະມີຄວາມຮູ້ເຖິງແທ່ນ
ບູຊານີ້, ຂ້າພະເຈົ້າຈະອ້າງກັບທ່ານເຖິງ
ພາບໃນຕອນຕົ້ນຂອງບັນທຶກນີ້.
13 ມັນຖືກສ້າງຂຶ້ນຕາມແບບຕຽງນອນ,
ດັ່ງທີ່ມີຢູ່ໃນບັນດາຊາວເຄນເດຍ, ແລະ
ມັນຕັ້ງຢູ່ຕໍ່ໜ້າພຣະເຈົ້າຂອງເອເຄນາ, ລິບ
ນາ, ມາມັກຄຣາ, ໂຄແຣສ໌, ແລະ ພຣະເຈົ້າ
ທີ່ຄືກັນກັບຂອງຟາຣາໂອ, ກະສັດແຫ່ງ
ເອຢິບ.
14 ເພື່ອວ່າທ່ານຈະມີຄວາມເຂົ້າໃຈເຖິງ
ພຣະເຈົ້າເຫລົ່ານີ້, ຂ້າພະເຈົ້າຈຶ່ງໄດ້ໃຫ້
ຮູບແບບໄວ້ແກ່ທ່ານໃນຕອນຕົ້ນ, ຊຶ່ງລັກ
ສະນະຂອງຮູບເຫລົ່ານັ້ນຖືກຊາວເຄນເດຍ
ເອີ້ນວ່າຣາລີໂນສ໌, ຊຶ່ງໝາຍເຖິງສັນຍາລັກ
ເປັນຮູບພາບ.

5 *ຂ* ຄນພ ການນັບຖືຮູບບູຊາ.
6 *ກ* ອສ ພຣະເຈົ້າຈອມປອມ, ດັ່ງທີ່ສະແດງໃຫ້ເຫັນໃນ ອັບຣາ., ສຳເນົາເລກທີ 1.
11 *ກ* ຄນພ ຮາມ.
*ຂ* ດນອ 3:13–18.

15 ແລະ ໃນ ຂະນະ ທີ່ ພວກ ເຂົາ ຍົກ ມື
ຂຶ້ນຈະມາຈັບຂ້າພະເຈົ້າ, ເພື່ອ ວ່າພວກ
ເຂົາຈະໄດ້ຖວາຍຂ້າພະເຈົ້າ ແລະ ເອົາຊີ
ວິດຂອງຂ້າພະເຈົ້າ, ຈົ່ງເບິ່ງ, ຂ້າພະເຈົ້າ
ໄດ້ເປັ່ງສຽງຂອງຂ້າພະເຈົ້າທູນຕໍ່ພຣະຜູ້
ເປັນເຈົ້າອົງເປັນພຣະເຈົ້າຂອງຂ້າພະເຈົ້າ,
ແລະ ພຣະຜູ້ເປັນເຈົ້າໄດ້ [ກ]ຮັບຟັງ ແລະ
ໄດ້ຍິນ, ແລະ ພຣະອົງໄດ້ເຮັດໃຫ້ຂ້າພະ
ເຈົ້າເຕັມໄປດ້ວຍພາບນິມິດທີ່ມາຈາກຜູ້ຊົງ
ລິດອຳນາດຍິ່ງໃຫຍ່, ແລະ ທູດທີ່ປະທັບຢູ່
ຂອງພຣະອົງໄດ້ມາຢືນຢູ່ທາງຂ້າງຂອງຂ້າ
ພະເຈົ້າ, ແລະ ໄດ້ [ຂ]ແກ້ສາຍຮັດຂ້າພະເຈົ້າ
ທັນທີ;
16 ແລະ ສຸລະສຽງຂອງພຣະອົງໄດ້ມາ
ເຖິງຂ້າພະເຈົ້າ: ອັບຣາຮາມ, ອັບຣາຮາມ,
ຈົ່ງເບິ່ງ, ນາມຂອງເຮົາຄື [ກ]ເຢໂຮວາ, ແລະ
ເຮົາໄດ້ຍິນເຈົ້າ, ແລະ ໄດ້ລົງມາປົດປ່ອຍ
ເຈົ້າ, ແລະ ພາເຈົ້າໄປຈາກບ້ານຂອງບິດາ
ຂອງເຈົ້າ, ແລະ ຈາກຍາດພີ່ນ້ອງທັງໝົດ
ຂອງເຈົ້າ, ໄປສູ່ຕ່າງ [ຂ]ແດນຊຶ່ງເຈົ້າບໍ່ຮູ້ຈັກ;
17 ແລະ ນີ້ເພາະວ່າພວກເຂົາໄດ້ຫັນຫົວ
ໃຈຂອງພວກເຂົາໄປຈາກເຮົາ, ເພື່ອນະມັດ
ສະການພຣະເຈົ້າຂອງເອເຄນາ, ແລະ
ພຣະເຈົ້າຂອງລິບນາ, ແລະ ພຣະເຈົ້າຂອງ
ມາມັກຄຣາ, ແລະ ພຣະເຈົ້າຂອງໂຄແຣສ໌,
ແລະ ພຣະເຈົ້າຂອງຟາຣາໂອ, ກະສັດແຫ່ງ
ເອຢິບ; ສະນັ້ນ ເຮົາຈຶ່ງໄດ້ລົງມາຢ້ຽມຢາມ
ພວກເຂົາ, ແລະ ທຳລາຍຄົນທີ່ຍົກມືຂອງ
ພວກເຂົາຂຶ້ນຕໍ່ຕ້ານເຈົ້າ, ອັບຣາຮາມ, ບຸດ
ຂອງເຮົາ, ເພື່ອເອົາຊີວິດຂອງເຈົ້າ.
18 ຈົ່ງເບິ່ງ, ເຮົາຈະຈູງເຈົ້າໄປດ້ວຍມື
ຂອງເຮົາ, ແລະ ເຮົາຈະພາເຈົ້າໄປ, ເພື່ອ
ມອບນາມຂອງເຮົາໄວ້ກັບເຈົ້າ, ແມ່ນແຕ່
[ກ]ຖານະປະໂລຫິດຂອງບິດາຂອງເຈົ້າ,
ແລະ ອຳນາດຂອງເຮົາຈະຢູ່ເໜືອເຈົ້າ.
19 ດັ່ງທີ່ໄດ້ເປັນກັບໂນອາສັນໃດ ມັນ
ກໍຈະເປັນກັບເຈົ້າສັນນັ້ນ; ແຕ່ຜ່ານການ
ປະຕິບັດສາດສະໜາກິດຂອງເຈົ້າ [ກ]ນາມ
ຂອງເຮົາຈະເປັນທີ່ຮູ້ຈັກໃນແຜ່ນດິນໂລກ
ຕະຫລອດການ, ເພາະວ່າເຮົາຄືພຣະເຈົ້າ
ຂອງເຈົ້າ.
20 ຈົ່ງເບິ່ງ, ໂປນພູໂປຕີຟາຢູ່ໃນແຜ່ນ
ດິນ [ກ]ອູເຣ, ແຫ່ງເຄນເດຍ. ແລະ ພຣະຜູ້
ເປັນເຈົ້າໄດ້ໂຄ່ນລົ້ມແທນບູຊາຂອງເອເຄ
ນາ, ແລະ ຂອງພຣະເຈົ້າຕ່າງໆຂອງແຜ່ນ
ດິນ, ແລະ ໄດ້ທຳລາຍມັນຈົນໝົດສິ້ນ,
ແລະ ໄດ້ລົງທັນປະໂລຫິດຈົນວ່າລາວໄດ້
ຕາຍໄປ; ແລະ ມີຄວາມເປັນທຸກຫລາຍ
ຢູ່ໃນເຄນເດຍ, ແລະ ໃນວັງຂອງຟາຣາ
ໂອນຳອີກ; ຊຶ່ງຟາຣາໂອໝາຍຄວາມວ່າ
ກະສັດໂດຍສາຍເລືອດ.
21 ບັດນີ້ ກະສັດແຫ່ງເອຢິບຜູ້ນີ້ເປັນຜູ້
ສືບຕະກຸນຈາກຜົນແອວຂອງ [ກ]ຮາມ, ແລະ
ເປັນສາຍເລືອດຂອງ [ຂ]ຊາວການາອານ
ໂດຍກຳເນີດ.
22 ຈາກຕະກຸນນີ້ ຊາວເອຢິບທັງປວງຈຶ່ງ
ມີມາ, ແລະ ສາຍເລືອດຂອງຊາວການາ
ອານໄດ້ຖືກປົກປັກຮັກສາໄວ້ໃນແຜ່ນດິນ
ດັ່ງນີ້.
23 ແຜ່ນດິນ [ກ]ເອຢິບທຳອິດໄດ້ຖືກພົບ
ເຫັນໂດຍຜູ້ຍິງຄົນໜຶ່ງ, ຜູ້ຊຶ່ງເປັນລູກສາວ
ຂອງຮາມ, ແລະ ລູກສາວຂອງເອຢິບໂຕ,

15 *ກ* ມຊຍ 9:17–18.
*ຂ* ອຣຣ 2:13.
16 *ກ* ຄມພ ເຢໂຮວາ.
*ຂ* ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
18 *ກ* ຄມພ ຖານະປະໂລຫິດ.
19 *ກ* ປຖກ 12:1–3.
20 *ກ* ປຖກ 11:28; ອຣຣ 2:4.
21 *ກ* ປຖກ 10:6; ພສສ 78:51; ມຊ 8:12.
*ຂ* ມຊ 7:6–8. ຄມພ ການາອານ, ຊາວການາອານ.
23 *ກ* ຄມພ ເອຢິບ.

ຊຶ່ງໃນພາສາຂອງຊາວເຄນເດຍໝາຍເຖິງ
ເອຢິບ, ຊຶ່ງໝາຍເຖິງສິ່ງຕ້ອງຫ້າມ;
24 ຕອນຜູ້ຍິງຄົນນີ້ພົບເຫັນແຜ່ນດິນ ມັນ
ຢູ່ໃຕ້ນ້ຳ, ຜູ້ຊຶ່ງຕໍ່ມາໄດ້ຕັ້ງຖິ່ນຖານພວກ
ລູກຊາຍຂອງນາງໃນນັ້ນ; ແລະ ດັ່ງນັ້ນ,
ຈາກຮາມ, ເຊື້ອຊາດນັ້ນຈຶ່ງຮັກສາຄຳສາບ
ແຊ່ງໄວ້ໃນແຜ່ນດິນ.
25 ບັດ ນີ້ ການ ປົກ ຄອງ ທຳ ອິດ ຂອງ
ເອຢິບໄດ້ຖືກສະຖາປະນາຂຶ້ນໂດຍຟາຣາ
ໂອ, ລູກຊາຍກົກຂອງເອຢິບໂຕ, ລູກສາວ
ຂອງຮາມ, ແລະ ເປັນໄປຕາມວິທີການປົກ
ຄອງຂອງຮາມ, ຊຶ່ງຄື ແບບປິຕຸ.
26 ຟາຣາໂອ, ໂດຍທີ່ເປັນຄົນຊອບທຳ,
ໄດ້ສະຖາປະນາອານາຈັກຂອງຕົນຂຶ້ນ
ແລະ ຕັດສິນຜູ້ຄົນຂອງເພິ່ນຢ່າງສະຫລາດ
ແລະ ທ່ຽງທຳຕະຫລອດວັນເວລາຂອງ
ເພິ່ນ, ໂດຍສະແຫວງຫາຢ່າງພາກພຽນ
ທີ່ຈະຮຽນແບບລະບຽບນັ້ນທີ່ຖືກສະຖາ
ປະນາໄວ້ໂດຍບັນພະບຸລຸດໃນລຸ້ນທຳອິດ,
ໃນວັນເວລາຂອງການປົກຄອງແບບປິຕຸ
ໃນສະໄໝທຳອິດ, ແມ່ນແຕ່ໃນການປົກ
ຄອງຂອງອາດາມ, ແລະ ຂອງໂນອານຳ
ອີກ, ບິດາຂອງເພິ່ນນຳອີກ, ຜູ້ໄດ້ອວຍ
ພອນເພິ່ນດ້ວຍ [ກ]ພອນຂອງແຜ່ນດິນໂລກ,
ແລະ ດ້ວຍພອນແຫ່ງປັນຍາ, ແຕ່ໄດ້ສາບ
ແຊ່ງເພິ່ນກ່ຽວກັບຖານະປະໂລຫິດ.
27 ບັດນີ້, ຟາຣາໂອໂດຍທີ່ເປັນຂອງທາ
ຍາດນີ້ ຈຶ່ງບໍ່ສາມາດມີສິດຂອງ [ກ]ຖານະປະ
ໂລຫິດ, ທັງໆທີ່ບັນດາຟາຣາໂອຢາກຈະ
ອ້າງສິດນີ້ດ້ວຍຄວາມເຕັມໃຈຈາກໂນອາ
ກໍຕາມ, ໂດຍຜ່ານຮາມ, ສະນັ້ນ ບິດາຂອງ
ຂ້າພະເຈົ້າຈຶ່ງໄດ້ຖືກພາໄປຫລົງຜິດໂດຍ
ການນັບຖືຮູບບູຊາຂອງພວກເຂົາ;
28 ແຕ່ຂ້າພະເຈົ້າຈະພະຍາຍາມ, ໃນ
ພາຍຫລັງ, ເພື່ອໃຫ້ເລື່ອງລາວກ່ຽວກັບ
ເຫດການທີ່ໄດ້ເກີດຂຶ້ນຈາກຕົວຂອງຂ້າ
ພະເຈົ້າເອງຍ້ອນກັບໄປເຖິງການເລີ່ມຕົ້ນ
ຂອງການສ້າງ, ເພາະ [ກ]ບັນທຶກໄດ້ມາເຖິງ
ມືຂອງຂ້າພະເຈົ້າ, ຊຶ່ງຂ້າພະເຈົ້າມີຢູ່ໃນປະ
ຈຸບັນນີ້.
29 ບັດ ນີ້, ຫລັງ ຈາກ ພວກ ປະ ໂລ ຫິດ
ຂອງເອເຄນາໄດ້ຖືກລົງທັນ ຈົນ ເຖິງແກ່
ຄວາມຕາຍ, ສິ່ງທີ່ໄດ້ກ່າວໄວ້ກັບຂ້າພະ
ເຈົ້າຈຶ່ງໄດ້ສຳເລັດຄົບຖ້ວນກ່ຽວກັບແຜ່ນ
ດິນເຄນເດຍ, ວ່າຈະມີຄວາມອຶດຢາກໃນ
ແຜ່ນດິນ.
30 ຄວາມ ອຶດ ຢາກ ໄດ້ ເກີດ ຂຶ້ນ ຕະ
ຫລອດທົ່ວແຜ່ນດິນເຄນເດຍດັ່ງນີ້, ແລະ
ບິດາຂອງຂ້າພະເຈົ້າໄດ້ຮັບທຸກທໍລະມານ
ແສນສາຫັດເພາະຄວາມອຶດຢາກ, ແລະ
ເພິ່ນໄດ້ກັບໃຈຈາກຄວາມຊົ່ວ ຊຶ່ງເພິ່ນໄດ້
ຕັ້ງໃຈຕໍ່ຕ້ານຂ້າພະເຈົ້າ, ເພື່ອເອົາ [ກ]ຊີວິດ
ຂອງຂ້າພະເຈົ້າ.
31 ແຕ່ບັນທຶກຂອງບັນພະບຸລຸດ, ແມ່ນ
ແຕ່ປິຕຸ, ກ່ຽວກັບສິດຂອງຖານະປະໂລຫິດ,
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຂ້າ
ພະເຈົ້າໄດ້ປົກປັກຮັກສາໄວ້ໃນມືຂອງຂ້າ
ພະເຈົ້າເອງ; ສະນັ້ນຄວາມຮູ້ເລື່ອງການ
ເລີ່ມຕົ້ນຂອງການສ້າງ, ແລະ ເລື່ອງ [ກ]ດາວ
ພະເຄາະທັງຫລາຍນຳອີກ, ແລະ ເລື່ອງ
ດວງດາວ, ດັ່ງທີ່ມັນໄດ້ຖືກເຮັດໃຫ້ເປັນທີ່ຮູ້
ຈັກແກ່ບັນພະບຸລຸດ, ໄດ້ຖືກຮັກສາໄວ້ແມ່ນ
ແຕ່ຈົນເຖິງວັນນີ້, ແລະ ຂ້າພະເຈົ້າຈະພະ
ຍາຍາມຂຽນບາງເລື່ອງຈາກສິ່ງເຫລົ່ານີ້ໄວ້
ໃນບັນທຶກນີ້, ເພື່ອຜົນປະໂຫຍດຂອງລູກ
ຫລານທີ່ຈະເກີດມາຫລັງຈາກຂ້າພະເຈົ້າ.

---

26 *ກ* ຄມພ ພອນ, ໃຫ້ພອນ, ເປັນພອນ.
27 *ກ* ຂປ 2.
ຄມພ ຖານະປະໂລຫິດ.
28 *ກ* ມຊ 6:5.
ຄມພ ປື້ມແຫ່ງຄວາມຊົງຈຳ.
30 *ກ* ອຮຣ 1:7.
31 *ກ* ອຮຣ 3:1–18.

## ບົດທີ 2

*ອັບຣາຮາມໜີຈາກອູເຣໄປຢູ່ການາອານ—
ພຣະເຢໂຮວາມາປະກົດຕໍ່ເພິ່ນທີ່ຮາຣານ
—ພອນຂອງພຣະກິດຕິຄຸນທັງປວງໄດ້ຖືກ
ສັນຍາໄວ້ແກ່ລູກຫລານຂອງເພິ່ນ ແລະ
ຜ່ານລູກຫລານຂອງເພິ່ນໄປສູ່ຜູ້ຄົນທັງ
ປວງ—ເພິ່ນໄປການາອານ ແລະ ໄປເອຢິບ
ຕໍ່.*

1 ບັດ ນີ້ ອົງ ພຣະ ຜູ້ ເປັນ ເຈົ້າ ເຮັດ ໃຫ້
ຄວາມອຶດຢາກເກີດຂຶ້ນ ຢ່າງໜັກຢູ່ແຜ່ນ
ດິນອູເຣ, ເຖິງຂະໜາດທີ່ [ກ]ຮາຣານ, ນ້ອງ
ຊາຍຂອງຂ້າພະເຈົ້າ, ໄດ້ຕາຍໄປ; ແຕ່ [ຂ]ເທ
ຣາ, ບິດາຂອງຂ້າພະເຈົ້າ, ຍັງມີຊີວິດຢູ່ໃນ
ແຜ່ນດິນອູເຣ, ແຫ່ງເຄນເດຍ.

2 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າ, ອັບຣາຮາມ, ໄດ້ເອົານາງ [ກ]ຊາ
ຣາຍມາເປັນເມຍ, ແລະ [ຂ]ນາໂຮ, ນ້ອງຊາຍ
ຂອງຂ້າພະເຈົ້າ, ໄດ້ເອົານາງມິລະການາ
ເປັນເມຍ, ຜູ້ຊຶ່ງເປັນລູກສາວຂອງຮາຣານ.

3 ບັດນີ້ ພຣະຜູ້ເປັນເຈົ້າໄດ້ [ກ]ກ່າວກັບຂ້າ
ພະເຈົ້າວ່າ: ອັບຣາຮາມ, ຈົ່ງໜີຈາກບ້ານ
ເກີດເມືອງນອນຂອງເຈົ້າ, ແລະ ຈາກຍາດ
ພີ່ນ້ອງຂອງເຈົ້າ, ແລະ ຈາກບ້ານຂອງບິດາ
ຂອງເຈົ້າ, ໄປຍັງແຜ່ນດິນບ່ອນທີ່ເຮົາຈະ
ສະແດງແກ່ເຈົ້າ.

4 ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ໜີຈາກແຜ່ນ
ດິນ [ກ]ອູເຣ, ແຫ່ງເຄນເດຍ, ໄປຍັງແຜ່ນດິນ
ການາອານ; ແລະ ຂ້າພະເຈົ້າໄດ້ເອົາທ້າວ
ໂລດ, ລູກຊາຍຂອງນ້ອງຊາຍຂອງຂ້າພະ
ເຈົ້າ ແລະ ເມຍຂອງລາວ, ແລະ ຊາຣາຍ
ເມຍຂອງຂ້າພະເຈົ້າໄປນຳ; ແລະ [ຂ]ບິດາ
ຂອງຂ້າພະເຈົ້າກໍໄດ້ຕາມຂ້າພະເຈົ້າໄປນຳ
ຄືກັນ, ໄປຍັງແຜ່ນດິນ ຊຶ່ງພວກເຮົາເອີ້ນວ່າ
ຮາຣານ.

5 ແລະ ຄວາມອຶດຢາກໄດ້ຜ່ອນຄາຍລົງ;
ແລະ ບິດາຂອງຂ້າພະເຈົ້າໄດ້ຢູ່ຮາຣານ
ຕໍ່ໄປ ແລະ ໄດ້ອາໄສຢູ່ທີ່ນັ້ນ, ເພາະວ່າມີ
ສັດຢ່າງຫລວງຫລາຍຢູ່ໃນຮາຣານ; ແລະ
ບິດາຂອງຂ້າພະເຈົ້າໄດ້ຫັນໄປສູ່ [ກ]ການ
ນະມັດສະການຮູບບູຊາຂອງເພິ່ນອີກ,
ສະນັ້ນ ເພິ່ນຈຶ່ງຄົງຢູ່ຕໍ່ໄປໃນຮາຣານ.

6 ແຕ່ຂ້າພະເຈົ້າ, ອັບຣາຮາມ, ແລະ
[ກ]ໂລດ, ລູກຊາຍຂອງນ້ອງຊາຍຂອງຂ້າ
ພະເຈົ້າ, ໄດ້ອະທິຖານຫາພຣະຜູ້ເປັນເຈົ້າ,
ແລະ ພຣະຜູ້ເປັນເຈົ້າໄດ້ມາ [ຂ]ປະກົດຕໍ່
ຂ້າພະເຈົ້າ, ແລະ ໄດ້ກ່າວກັບຂ້າພະເຈົ້າ
ວ່າ: ຈົ່ງລຸກຂຶ້ນ, ແລະ ພາໂລດໄປກັບເຈົ້າ;
ເພາະວ່າເຮົາມີຈຸດປະສົງທີ່ຈະພາເຈົ້າໄປ
ຈາກຮາຣານ, ແລະ ຈະເຮັດໃຫ້ເຈົ້າເປັນ
ຜູ້ປະຕິບັດສາດສະໜາກິດໃນ [ຄ]ນາມຂອງ
ເຮົາຢູ່ຕ່າງ [ງ]ແດນ ຊຶ່ງເຮົາຈະມອບໃຫ້ແກ່
ລູກຫລານຂອງເຈົ້າຕໍ່ຈາກເຈົ້າ ເພື່ອເປັນ
ຊັບສົມບັດອັນເປັນນິດ, ເມື່ອພວກເຂົາເຊື່ອ
ຟັງສຽງຂອງເຮົາ.

7 ເພາະວ່າເຮົາຄືພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງເຈົ້າ; ເຮົາປະທັບຢູ່ໃນ
ສະຫວັນ; ແຜ່ນດິນໂລກຄື [ກ]ບ່ອນຮອງຕີນ

---

**2** 1 *ກ* ປຖກ 11:28.
*ຂ* ປຖກ 11:24–26; 1 ຂຄ 1:26.
2 *ກ* ປຖກ 11:29. ຄມພ ຊາຣາ.
*ຂ* ປຖກ 11:27; 22:20–24.
3 *ກ* ປຖກ 12:1; ກຈກ 7:1–3.
4 *ກ* ນມຢ 9:7.
*ຂ* ປຖກ 11:31–32.
5 *ກ* ຢຊ 24:2.
6 *ກ* ຄມພ ໂລດ.
*ຂ* ປຖກ 17:1. ຄມພ ພຣະເຢຊູຄຣິດ—ການເປັນຢູ່ຂອງພຣະຄຣິດກ່ອນມະຕະ.
*ຄ* ປຖກ 12:2–3; ອຣຣ 1:19.
*ງ* ປຖກ 13:14–15; 17:8; ອພຍ 33:1. ຄມພ ແຜ່ນດິນແຫ່ງຄຳສັນຍາ.
7 *ກ* 1 ນຟ 17:39; ຄພ 38:17.

ຂອງ ເຮົາ; ເຮົາ ເດ່ ມື ຂອງ ເຮົາ ເທິງ ທະເລ,
ແລະ ມັນເຊື່ອຟັງສຽງຂອງເຮົາ; ເຮົາ ເຮັດ
ໃຫ້ລົມ ແລະ ໄຟ ເປັນ [ຂ]ລົດມ້າຂອງເຮົາ;
ເຮົາກ່າວກັບພູເຂົາວ່າ—ຈົ່ງອອກໄປຈາກ
ບ່ອນ ນີ້—ແລະ ຈົ່ງ ເບິ່ງ, ມັນ ຖືກພັດໄປ
ໂດຍລົມບ້າໝູ, ໃນທັນທີ, ທັນໃດ.
8 ນາມຂອງເຮົາຄື [ກ]ເຢໂຮວາ, ແລະ ເຮົາ
[ຂ]ຮູ້ຈັກທີ່ສຸດຕັ້ງແຕ່ຕົ້ນ; ສະນັ້ນ ມືຂອງເຮົາ
ຈະຢູ່ເທິງເຈົ້າ.
9 ແລະ ເຮົາຈະເຮັດໃຫ້ມີປະຊາຊາດທີ່
ຍິ່ງ ໃຫຍ່ ຈາກ ເຈົ້າ, ແລະ ເຮົາຈະ [ກ]ອວຍ
ພອນເຈົ້າເກີນກວ່າຈະວັດແທກໄດ້, ແລະ
ເຮັດໃຫ້ຊື່ຂອງເຈົ້າຍິ່ງໃຫຍ່ໃນບັນດາປະ
ຊາຊາດທັງປວງ, ແລະ ເຈົ້າຈະເປັນພອນ
ໃຫ້ ແກ່ ລູກ ຫລານ ຂອງເຈົ້າຕໍ່ຈາກ ເຈົ້າ,
ເພື່ອວ່າໃນມືຂອງພວກເຂົາ, ພວກເຂົາຈະ
ນຳການປະຕິບັດສາດສະໜາກິດ ແລະ
[ຂ]ຖານະປະໂລຫິດນີ້ໄປສູ່ປະຊາຊາດທັງ
ປວງ;
10 ແລະ ເຮົາ ຈະ ປະທານ ພອນ ໃຫ້ ແກ່
ພວກ ເຂົາຜ່ານນາມຂອງເຮົາ; ເພາະວ່າ
ເທົ່າທີ່ຫລາຍຕໍ່ຫລາຍຄົນທີ່ຮັບເອົາ [ກ]ພຣະ
ກິດ ຕິຄຸນນີ້ ຈະຖືກເອີ້ນ ຕາມ ຊື່ຂອງເຈົ້າ,
ແລະ ຈະນັບໄວ້ເປັນ [ຂ]ລູກຫລານຂອງເຈົ້າ,
ແລະ ຈະລຸກຂຶ້ນ ແລະ ອວຍ ພອນ ເຈົ້າ,
ເປັນ [ຄ]ບິດາຂອງພວກເຂົາ;
11 ແລະ ເຮົາຈະ [ກ]ອວຍພອນຄົນທີ່ອວຍ
ພອນເຈົ້າ, ແລະ ສາບແຊ່ງຄົນທີ່ສາບແຊ່ງ
ເຈົ້າ; ແລະ ໃນເຈົ້າ (ນັ້ນຄື, ໃນຖານະປະໂລ
ຫິດຂອງເຈົ້າ) ແລະ ໃນ [ຂ]ລູກຫລານຂອງ
ເຈົ້າ (ນັ້ນຄື, ຖານະປະໂລຫິດຂອງເຈົ້າ),
ເພາະວ່າເຮົາໄດ້ໃຫ້ຄຳສັນຍາແກ່ເຈົ້າ ວ່າ
[ຄ]ສິດທິນີ້ຈະຄົງຢູ່ໃນເຈົ້າ, ແລະ ໃນລູກ
ຫລານຂອງເຈົ້າຕໍ່ຈາກເຈົ້າ (ນັ້ນໝາຍເຖິງ,
ລູກຫລານ ໂດຍກົງ, ຫລື ລູກຫລານຂອງ
ເຈົ້າ) ຄອບຄົວທັງໝົດຂອງແຜ່ນດິນໂລກ
ຈະໄດ້ຮັບພອນ, ແມ່ນແຕ່ດ້ວຍພອນແຫ່ງ
ພຣະກິດຕິຄຸນ, ຊຶ່ງເປັນພອນແຫ່ງຄວາມ
ລອດ, ແມ່ນແຕ່ແຫ່ງຊີວິດນິລັນດອນ.
12 ບັດນີ້, ຫລັງຈາກພຣະຜູ້ເປັນເຈົ້າໄດ້
ເຊົາກ່າວກັບຂ້າພະເຈົ້າ, ແລະ ໄດ້ຖອນ
ພຣະພັກຂອງພຣະອົງໄປຈາກຂ້າພະເຈົ້າ
ແລ້ວ, ຂ້າພະເຈົ້າໄດ້ກ່າວຢູ່ໃນໃຈວ່າ: ຜູ້
ຮັບໃຊ້ຂອງພຣະອົງໄດ້ [ກ]ສະແຫວງຫາ
ພຣະອົງຢ່າງພາກພຽນ; ບັດນີ້ ຂ້າພຣະອົງ
ໄດ້ພົບພຣະອົງແລ້ວ;
13 ພຣະອົງໄດ້ສົ່ງທູດຂອງພຣະອົງລົງ
ມາ [ກ]ປົດປ່ອຍຂ້າພຣະອົງຈາກພຣະເຈົ້າ
ຂອງເອເຄນາ, ແລະ ຈະເປັນການດີຖ້າ
ຫາກຂ້າພຣະອົງເຊື່ອຟັງສຸລະສຽງຂອງ
ພຣະອົງ, ສະນັ້ນ ຂໍຈົ່ງໃຫ້ຜູ້ຮັບ ໃຊ້ຂອງ
ພຣະອົງລຸກຂຶ້ນ ແລະ ອອກໄປຢ່າງສັນຕິ.
14 ດັ່ງນັ້ນ ຂ້າພະເຈົ້າ, ອັບຣາຮາມ, ຈຶ່ງ
ໄດ້ອອກໄປດັ່ງທີ່ພຣະຜູ້ເປັນເຈົ້າໄດ້ກ່າວ
ກັບຂ້າພະເຈົ້າ, ແລະ ໂລດໄດ້ໄປກັບຂ້າ
ພະເຈົ້າ; ແລະ ຂ້າພະເຈົ້າ, ອັບຣາຮາມ, ມີ
ອາຍຸໄດ້ [ກ]ຫົກສິບສອງປີຕອນຂ້າພະເຈົ້າ
ອອກຈາກຮາຣານ.

---

7 *ຂ* ອຊຢ 66:15–16.
8 *ກ* ຄມພ ເຢໂຮວາ.
*ຂ* ຄມພ ຮອບຮູ້ທຸກຢ່າງ.
9 *ກ* 1 ນຟ 17:40; 2 ນຟ 29:14; 3 ນຟ 20:27; ມມ 5:20. ຄມພ ອັບຣາຮາມ—ເຊື້ອສາຍຂອງອັບຣາຮາມ.
*ຂ* ຄພ 84:17–19; ມຊ 6:7. ຄມພ ຖານະປະໂລຫິດແຫ່ງເມນຄີເສເດັກ.
10 *ກ* ຄລຕ 3:7–9.
*ຂ* ປຖກ 13:16; ຄລຕ 3:29; 2 ນຟ 30:2.
*ຄ* ຄມພ ບິຕຸ, ແຫ່ງບິຕຸ.
11 *ກ* ຄມພ ພັນທະສັນຍາຂອງອັບຣາຮາມ.
*ຂ* ອຊຢ 61:9.
*ຄ* ຄມພ ສິດທິຂອງອ້າຍກົກ; ຖານະປະໂລຫິດ; ອິດສະຣາເອນ.
12 *ກ* ຄພ 88:63.
13 *ກ* ອຣຣ 1:15–17.
14 *ກ* ປຖກ 12:4–5.

15 ແລະ ຂ້າພະເຈົ້າໄດ້ພາ [ກ]ຊາຣາຍ,
ຜູ້ທີ່ຂ້າພະເຈົ້າໄດ້ເອົາມາເປັນເມຍຕອນ
ຂ້າພະເຈົ້າຢູ່ [ຂ]ອູເຣ, ໃນເຄນເດຍ, ແລະ
ໂລດ, ລູກຊາຍຂອງນ້ອງຊາຍຂອງຂ້າພະ
ເຈົ້າ, ແລະ ເຂົ້າຂອງທັງໝົດຂອງພວກເຮົາ
ທີ່ພວກເຮົາໄດ້ຮວບຮວມໄວ້, ແລະ ຜູ້ຄົນ
ທີ່ພວກເຮົາເອົາ [ຄ]ຊະນະໃຈຢູ່ໃນຮາຣານ
ໄປນຳ, ແລະ ໄດ້ອອກໄປໃນເສັ້ນທາງທີ່ພາ
ໄປຫາແຜ່ນດິນ [ງ]ການາອານ, ແລະ ໄດ້ອາ
ໄສຢູ່ໃນຜ້າເຕັ້ນເມື່ອພວກເຮົາຢູ່ລະຫວ່າງ
ທາງ;
16 ສະນັ້ນ, ຊົ່ວ ນິ ລັນ ດອນ ຄື ສິ່ງ ປົກ
ປ້ອງພວກເຮົາ ແລະ [ກ]ຫີນສີລາຂອງພວກ
ເຮົາ ແລະ ຄວາມລອດຂອງພວກເຮົາ, ໃນ
ຂະນະທີ່ພວກເຮົາເດີນທາງຈາກຮາຣານ
ໂດຍຜ່ານໄປທາງເຈີຊອນ, ເພື່ອມາຍັງ
ແຜ່ນດິນການາອານ.
17 ບັດນີ້ ຂ້າພະເຈົ້າ, ອັບຣາຮາມ, ໄດ້
ສ້າງ [ກ]ແທ່ນບູຊາໃນແຜ່ນດິນເຈີຊອນ,
ແລະ ຖວາຍເຄື່ອງບູຊາແດ່ພຣະຜູ້ເປັນ
ເຈົ້າ, ແລະ ໄດ້ອະທິຖານທູນຂໍເພື່ອວ່າ
[ຂ]ຄວາມອຶດຢາກຈະໄດ້ໝົດສິ້ນໄປຈາກ
ບ້ານຂອງບິດາຂອງຂ້າພະເຈົ້າ, ເພື່ອວ່າ
ພວກເຂົາຈະບໍ່ຕາຍ.
18 ແລະ ຈາກນັ້ນພວກເຮົາໄດ້ຜ່ານ
ເຈີຊອນທາງແຜ່ນດິນໄປຍັງສະຖານທີ່
ຊື່ ເຊເຄມ; ມັນຕັ້ງຢູ່ໃນທົ່ງພຽງຂອງໂມ
ເຣ, ແລະ ເມື່ອພວກເຮົາໄດ້ເຂົ້າມາເຖິງ
ຊາຍແດນແຜ່ນດິນຂອງ [ກ]ຊາວການາອານ
ແລ້ວ, ແລະ ຂ້າພະເຈົ້າໄດ້ [ຂ]ຖວາຍເຄື່ອງ
ບູຊາຢູ່ທີ່ນັ້ນໃນທົ່ງພຽງຂອງໂມເຣ, ແລະ
ໄດ້ເອີ້ນຫາພຣະຜູ້ເປັນເຈົ້າດ້ວຍຄວາມຈິງ
ຮັກພັກດີ, ເພາະວ່າພວກເຮົາໄດ້ມາເຖິງ
ແຜ່ນດິນຂອງປະຊາຊາດທີ່ນັບຖືຮູບບູຊາ
ນີ້.
19 ແລະ ພຣະຜູ້ເປັນເຈົ້າໄດ້ມາປະກົດຕໍ່
ຂ້າພະເຈົ້າໃນການຕອບຄຳອະທິຖານຂອງ
ຂ້າພະເຈົ້າ, ແລະ ໄດ້ກ່າວກັບຂ້າພະເຈົ້າ
ວ່າ: ເຮົາຈະມອບ [ກ]ແຜ່ນດິນນີ້ໃຫ້ແກ່ລູກ
ຫລານຂອງເຈົ້າ.
20 ແລະ ຂ້າພະເຈົ້າ, ອັບຣາຮາມ, ໄດ້
ລຸກຂຶ້ນຈາກສະຖານທີ່ຂອງແທ່ນບູຊາ ຊຶ່ງ
ຂ້າພະເຈົ້າໄດ້ສ້າງແດ່ພຣະຜູ້ເປັນເຈົ້າ,
ແລະ ໄດ້ອອກໄປຈາກບ່ອນນັ້ນໄປຫາພູ
ໜ່ວຍໜຶ່ງຢູ່ທາງທິດຕາເວັນອອກຂອງ
ເມືອງ [ກ]ເບັດເອນ, ແລະ ໄດ້ຕັ້ງຜ້າເຕັ້ນຂອງ
ຂ້າພະເຈົ້າຢູ່ທີ່ນັ້ນ, ເບັດເອນຕັ້ງຢູ່ທາງທິດ
ຕາເວັນຕົກ, ແລະ ເມືອງ [ຂ]ອາອີຢູ່ທາງທິດ
ຕາເວັນອອກ; ແລະ ຢູ່ທີ່ນັ້ນຂ້າພະເຈົ້າໄດ້
ສ້າງແທ່ນບູຊາໜຶ່ງແທ່ນອີກແດ່ພຣະຜູ້ເປັນ
ເຈົ້າ, ແລະ ໄດ້ [ຄ]ເອີ້ນຫາພຣະນາມຂອງ
ພຣະຜູ້ເປັນເຈົ້າອີກ.
21 ແລະ ຂ້າພະເຈົ້າ, ອັບຣາຮາມ, ໄດ້
ເດີນທາງ, ໂດຍມຸ້ງໜ້າໄປທາງໃຕ້; ແລະ
ຄວາມອຶດຢາກກໍສືບຕໍ່ມີຢູ່ໃນແຜ່ນດິນ;
ແລະ ຂ້າພະເຈົ້າ, ອັບຣາຮາມ, ໄດ້ຕັດ
ສິນໃຈລົງໄປຫາເອຢິບ, ເພື່ອພັກຢູ່ທີ່ນັ້ນ,
ເພາະວ່າຄວາມອຶດຢາກເລີ່ມຮ້າຍແຮງໜັກ
ຂຶ້ນກວ່າເກົ່າ.
22 ແລະ ເຫດການໄດ້ບັງເກີດຂຶ້ນ ເມື່ອ

---

15 *ກ* ຄມພ ຊາຣາ.
*ຂ* ຄມພ ອູເຣ.
*ຄ* ຄມພ ປ່ຽນໃຈ, ການ ປ່ຽນໃຈເຫລື້ອມໃສ.
*ງ* ຄມພ ການາອານ, ຊາວການາອານ.
16 *ກ* ຄມພ ຫີນ.
17 *ກ* ຄມພ ແທ່ນບູຊາ.
*ຂ* ອຣຣ 1:29.
18 *ກ* ປຖກ 12:6.
*ຂ* ຄມພ ເສຍສະລະ, ການເສຍສະລະ.
19 *ກ* ປຖກ 13:12–15; 17:8; ອພຍ 3:1–10; ຈບຊ 34:2. ຄມພ ແຜ່ນດິນ ແຫ່ງຄຳສັນຍາ.
20 *ກ* ຄມພ ເບັດເອນ.
*ຂ* ປຖກ 13:3–4.
*ຄ* ປຖກ 12:8.

ຂ້າພະເຈົ້າໄດ້ມາໃກ້ຈົນເກືອບເຖິງເອຢິບ,
ພຣະຜູ້ເປັນເຈົ້າໄດ້ກ່າວ ກັບຂ້າພະເຈົ້າວ່າ:
ຈົ່ງເບິ່ງ, [ກ]ຊາຣາຍ, ເມຍຂອງເຈົ້າ, ເປັນຍິງ
ທີ່ສວຍງາມເປັນຕາຊົມ;
23 ສະນັ້ນ ເຫດການຈະບັງເກີດຂຶ້ນຄື
ເມື່ອຊາວເອຢິບເຫັນນາງ, ພວກເຂົາຈະ
ເວົ້າວ່າ—ນາງເປັນເມຍຂອງລາວ; ແລະ
ພວກເຂົາຈະຂ້າເຈົ້າ, ແຕ່ພວກເຂົາຈະ
ຊ່ອຍນາງໄວ້ບໍ່ໃຫ້ຕາຍ; ສະນັ້ນ ຈົ່ງເບິ່ງວ່າ
ເຈົ້າເຮັດໃນວິທີນີ້:
24 ໃຫ້ນາງກ່າວກັບຊາວເອຢິບວ່າ ນາງ
ເປັນນ້ອງສາວຂອງເຈົ້າ, ແລະ ເຈົ້າຈະມີຊີ
ວິດຢູ່.
25 ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າ
ພະເຈົ້າ, ອັບຣາຮາມ, ໄດ້ບອກຊາຣາຍ,
ເມຍຂອງຂ້າພະເຈົ້າ, ທຸກສິ່ງທີ່ພຣະຜູ້ເປັນ
ເຈົ້າໄດ້ກ່າວກັບຂ້າພະເຈົ້າ—ສະນັ້ນ ໃຫ້
ກ່າວກັບພວກເຂົາ, ອ້າຍຂໍຮ້ອງນ້ອງ, ວ່າ
ນ້ອງເປັນນ້ອງສາວຂອງອ້າຍ, ເພື່ອວ່າມັນ
ຈະເປັນການດີກັບອ້າຍເພື່ອເຫັນແກ່ນ້ອງ,
ແລະ ອ້າຍຈະມີຊີວິດຢູ່ເພາະນ້ອງ.

## ບົດທີ 3

*ອັບຣາຮາມຮຽນຮູ້ກ່ຽວກັບດວງຕາເວັນ, ດວງເດືອນ, ແລະ ດວງດາວ ໂດຍທາງອຸລີມ ແລະ ທຸມມີມ—ພຣະຜູ້ເປັນເຈົ້າເປີດເຜີຍທຳມະຊາດນິລັນດອນຂອງວິນຍານແກ່ເພິ່ນ—ເພິ່ນຮຽນຮູ້ເຖິງຊີວິດກ່ອນເກີດ, ການແຕ່ງຕັ້ງລ່ວງໜ້າ, ການສ້າງ, ການເລືອກພຣະຜູ້ໄຖ່, ແລະ ສະພາວະທີສອງຂອງມະນຸດ.*

1 ແລະ ຂ້າພະເຈົ້າ, ອັບຣາຮາມ, ມີ [ກ]ອຸ
ລີມ ແລະ ທຸມມີມ, ຊຶ່ງພຣະຜູ້ເປັນເຈົ້າອົງ
ເປັນພຣະເຈົ້າຂອງຂ້າພະເຈົ້າໄດ້ປະທານ
ໃຫ້ແກ່ຂ້າພະເຈົ້າ, ໃນອູເຣ ແຫ່ງເຄນ
ເດຍ;
2 ແລະ ຂ້າພະເຈົ້າໄດ້ເຫັນ [ກ]ໝູ່ດາວ, ວ່າ
ມັນເຈີດຈ້າ, ແລະ ວ່າດວງໜຶ່ງໃນໝູ່ດາວ
ຢູ່ໃກ້ພຣະບັນລັງຂອງພຣະເຈົ້າ; ແລະ ມີ
ດາວທີ່ເຈີດຈ້າຫລາຍດວງທີ່ຢູ່ໃກ້ກັບດາວ
ດວງນີ້;
3 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າວ່າ: ໝູ່ດາວເຫລົ່ານີ້ເປັນດາວປົກ
ຄອງ; ແລະ ຊື່ຂອງດາວທີ່ເຈີດຈ້າຄື [ກ]ໂຄ
ລອບ, ເພາະວ່າມັນຢູ່ໃກ້ເຮົາ, ເພາະວ່າ
ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ
ຂອງເຈົ້າ: ເຮົາໄດ້ກຳນົດດວງນີ້ໃຫ້ປົກຄອງ
ດວງດາວທັງປວງ ຊຶ່ງຢູ່ໃນລະບຽບດຽວກັນ
ກັບບ່ອນທີ່ເຈົ້າຢືນຢູ່.
4 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າ, ໂດຍທາງອຸລີມ ແລະ ທຸມມີມວ່າ
ໂຄລອບສອດຄ່ອງກັບວິທີຂອງພຣະຜູ້ເປັນ
ເຈົ້າ, ຕາມເວລາ ແລະ ລະດູການຂອງມັນ
ໃນການໝຸນວຽນຂອງມັນ; ວ່າການໝຸນ
ວຽນຮອບໜຶ່ງເປັນໜຶ່ງ [ກ]ວັນຂອງພຣະຜູ້
ເປັນເຈົ້າ, ຕາມວິທີຄິດໄລ່ຂອງພຣະອົງ,
ເປັນໜຶ່ງພັນ [ຂ]ປີຕາມເວລາທີ່ໄດ້ກຳນົດໄວ້
ເທິງບ່ອນທີ່ເຈົ້າຢືນຢູ່. ນີ້ຄືການຄິດໄລ່ຂອງ
ພຣະຜູ້ເປັນເຈົ້າ, ຕາມການຄິດໄລ່ຂອງໂຄ
ລອບ.
5 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າວ່າ: ດາວພະເຄາະທີ່ມີແສງເຈີດ
ຈ້າໜ້ອຍກວ່າ, ໜ້ອຍກວ່າດວງທີ່ຈະປົກ

22 *ກ* ປຖກ 12:11–13.
**3** 1 *ກ* ອພຍ 28:30; ມຊຢ 8:13; 28:13–16; ຈສ—ປ 1:35.
ຄມພ ອຸລີມ ແລະ ທຸມມີມ.
2 *ກ* ອຣຣ 1:31.
3 *ກ* ເບິ່ງ ອັບຣາ., ສຳເນົາເລກທີ 2, ຮູບທີ 1–5.
ຄມພ ໂຄລອບ.
4 *ກ* ອຣຣ 5:13.
*ຂ* ພສສ 90:4; 2 ປຕ 3:8.

ຄອງກາງເວັນ, ແມ່ນແຕ່ກາງຄືນ, ຍັງເໜືອ
ກວ່າ ຫລື ເຈີດຈ້າກວ່າບ່ອນທີ່ເຈົ້າຢືນຢູ່
ໃນເລື່ອງການຄິດໄລ່ເວລາ, ເພາະວ່າມັນ
ເຄື່ອນຍ້າຍໄປໃນລະບຽບທີ່ຊ້າກວ່າ; ຢູ່
ໃນລະບຽບນີ້ເພາະວ່າມັນຢູ່ເໜືອແຜ່ນ
ດິນໂລກທີ່ເຈົ້າຢືນຢູ່, ສະນັ້ນ ການຄິດໄລ່
ເວລາກ່ຽວກັບຈຳນວນຂອງວັນ, ເດືອນ,
ແລະ ປີຂອງມັນຈຶ່ງມີໜ້ອຍກວ່າ.
6 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າ
ພະເຈົ້າວ່າ: ບັດນີ້, ອັບຣາຮາມ, ມີຂໍ້ເທັດຈິງ
ຢູ່ ᵃສອງຂໍ້, ຈົ່ງເບິ່ງ ດວງຕາຂອງເຈົ້າຫລຽວ
ເຫັນມັນ; ມັນໄດ້ຖືກມອບໃຫ້ແກ່ເຈົ້າເພື່ອ
ຈະໄດ້ຮູ້ຈັກເວລາຂອງການຄິດໄລ່, ແລະ
ເວລາທີ່ໄດ້ກຳນົດໄວ້, ແທ້ຈິງແລ້ວ, ເວລາ
ທີ່ໄດ້ກຳນົດໄວ້ສຳລັບແຜ່ນດິນໂລກທີ່ເຈົ້າ
ຢືນຢູ່, ແລະ ເວລາທີ່ໄດ້ກຳນົດໄວ້ສຳລັບ
ຄວາມສະຫວ່າງທີ່ເຈີດຈ້າກວ່າ ຊຶ່ງໄດ້ກຳ
ນົດໄວ້ເພື່ອໃຫ້ປົກຄອງກາງເວັນ, ແລະ
ເວລາທີ່ໄດ້ກຳນົດໄວ້ສຳລັບຄວາມສະ
ຫວ່າງທີ່ເຈີດຈ້າໜ້ອຍກວ່າ ຊຶ່ງໄດ້ກຳນົດ
ໄວ້ເພື່ອໃຫ້ປົກຄອງກາງຄືນ.
7 ບັດນີ້ ເວລາທີ່ໄດ້ກຳນົດໄວ້ສຳລັບ
ຄວາມສະຫວ່າງທີ່ເຈີດຈ້າໜ້ອຍກວ່າຕາມ
ການຄິດໄລ່ຂອງມັນແມ່ນດົນກວ່າການຄິດ
ໄລ່ເວລາຂອງແຜ່ນດິນໂລກບ່ອນທີ່ເຈົ້າ
ຢືນຢູ່.
8 ແລະ ໃນຂໍ້ເທັດຈິງສອງຂໍ້ນີ້, ຈະມີຂໍ້
ເທັດຈິງອີກຂໍ້ໜຶ່ງຢູ່ເໜືອມັນ, ນັ້ນຄື, ຈະມີ
ດາວພະເຄາະອີກດວງໜຶ່ງ ຊຶ່ງການຄິດໄລ່
ເວລາຂອງມັນຈະດົນນານກວ່ານີ້ອີກ;
9 ແລະ ຈະມີການຄິດໄລ່ເວລາຂອງ
ດາວພະເຄາະດວງໜຶ່ງເໜືອອີກດວງໜຶ່ງ
ດັ່ງນັ້ນ, ຈົນກວ່າເຈົ້າມາໃກ້ໂຄລອບ, ຊຶ່ງ
ໂຄລອບນັ້ນສອດຄ່ອງກັບການຄິດໄລ່
ເວລາຂອງພຣະຜູ້ເປັນເຈົ້າ; ຊຶ່ງໂຄລອບ
ນັ້ນຕັ້ງຢູ່ໃກ້ພຣະບັນລັງຂອງພຣະເຈົ້າ,
ເພື່ອປົກຄອງດາວພະເຄາະທັງໝົດເຫລົ່າ
ນັ້ນຊຶ່ງຢູ່ໃນ ᵃລະບຽບດຽວກັນກັບບ່ອນທີ່
ເຈົ້າຢືນຢູ່.
10 ແລະ ມັນຖືກມອບໃຫ້ແກ່ເຈົ້າເພື່ອຈະ
ໄດ້ຮູ້ຈັກເວລາທີ່ໄດ້ກຳນົດໄວ້ສຳລັບດວງ
ດາວທັງໝົດທີ່ຖືກກຳນົດໃຫ້ສ່ອງແສງ, ຈົນ
ກວ່າເຈົ້າມາໃກ້ພຣະບັນລັງຂອງພຣະເຈົ້າ.
11 ດັ່ງນັ້ນຂ້າພະເຈົ້າ, ອັບຣາຮາມ, ຈຶ່ງ
ໄດ້ ᵃກ່າວກັບພຣະຜູ້ເປັນເຈົ້າ, ໜ້າຕໍ່ໜ້າ,
ຄືກັນກັບຄົນຜູ້ໜຶ່ງເວົ້າກັບຄົນອີກຜູ້ໜຶ່ງ;
ແລະ ພຣະອົງໄດ້ບອກຂ້າພະເຈົ້າເຖິງວຽກ
ງານຊຶ່ງພຣະຫັດຂອງພຣະອົງໄດ້ສ້າງ;
12 ແລະ ພຣະອົງໄດ້ກ່າວກັບຂ້າພະ
ເຈົ້າວ່າ: ບຸດຂອງເຮົາ, ບຸດຂອງເຮົາ (ແລະ
ພຣະອົງໄດ້ເດ່ພຣະຫັດຂອງພຣະອົງອອກ
ມາ), ຈົ່ງເບິ່ງ ເຮົາຈະສະແດງໃຫ້ເຈົ້າເຫັນ
ທຸກສິ່ງທັງປວງເຫລົ່ານີ້. ແລະ ພຣະອົງ
ໄດ້ວາງພຣະຫັດຂອງພຣະອົງໄວ້ເທິງຕາ
ຂອງຂ້າພະເຈົ້າ, ແລະ ຂ້າພະເຈົ້າໄດ້ເຫັນ
ສິ່ງເຫລົ່ານັ້ນຊຶ່ງພຣະຫັດຂອງພຣະອົງໄດ້
ສ້າງ, ຊຶ່ງມີຢ່າງຫລວງຫລາຍ; ແລະ ມັນໄດ້
ທະວີຂຶ້ນຢູ່ຕໍ່ໜ້າຂອງຂ້າພະເຈົ້າ, ແລະ ຂ້າ
ພະເຈົ້າບໍ່ສາມາດຫລຽວເຫັນບ່ອນສຸດຂອງ
ມັນ.
13 ແລະ ພຣະອົງໄດ້ກ່າວກັບຂ້າພະ
ເຈົ້າວ່າ: ນີ້ຄື ໄຊນີຫາ, ຊຶ່ງຄືດວງຕາເວັນ.
ແລະ ພຣະອົງໄດ້ກ່າວກັບຂ້າພະເຈົ້າວ່າ:
ໂຄຄອບ, ຊຶ່ງຄືດວງດາວ. ແລະ ພຣະອົງ
ໄດ້ກ່າວກັບຂ້າພະເຈົ້າວ່າ: ໂອລີອາ, ຊຶ່ງ
ຄືດວງເດືອນ. ແລະ ພຣະອົງໄດ້ກ່າວກັບ
ຂ້າພະເຈົ້າວ່າ: ໂຄຄໍບີມ, ຊຶ່ງໝາຍເຖິງໝູ່
ດວງດາວ, ຫລື ຄວາມສະຫວ່າງທີ່ເຈີດ

6*ກ* ອຣຣ 3:16–19. | 9*ກ* ຄພ 88:37–44. | 11*ກ* ປຖກ 17:1; ຈບຊ 12:5–8.

# ສຳເນົາຈາກໜັງສືອັບຣາຮາມ

ເລກທີ 2



## ຄຳອະທິບາຍ

ຮູບທີ 1. ໂຄລອບ, ໝາຍເຖິງການສ້າງຄັ້ງທຳອິດ, ໃກ້ໂລກຊັ້ນສູງ, ຫລື ທີ່ປະທັບຂອງພຣະເຈົ້າ. ອັນດັບໜຶ່ງໃນການປົກຄອງ, ອັນດັບສຸດທ້າຍກ່ຽວກັບການວັດແທກເວລາ. ວັດແທກເວລາຕາມຂອງໂລກຊັ້ນສູງ, ຊຶ່ງເວລາຂອງໂລກຊັ້ນສູງໝາຍເຖິງໜຶ່ງວັນເທົ່າກັບໜຶ່ງສອກ. ໜຶ່ງວັນໃນໂຄລອບແມ່ນເທົ່າກັບໜຶ່ງພັນປີຕາມການວັດແທກເວລາຂອງແຜ່ນດິນໂລກນີ້, ຊຶ່ງຖືກເອີ້ນໂດຍຊາວເອຢິບວ່າ ຢາ-ໂອ-ເອ.

ຮູບທີ 2. ຕັ້ງຢູ່ຖັດຈາກໂຄລອບ, ຖືກເອີ້ນໂດຍຊາວເອຢິບວ່າ ໂອລິບລິດ, ຊຶ່ງເປັນການປົກຄອງແຫ່ງການສ້າງອັນຍິ່ງໃຫຍ່ທີ່ລອງລົງມາ ຢູ່ໃກ້ໂລກຊັ້ນສູງ ຫລື ສະຖານທີ່ບ່ອນພຣະເຈົ້າປະທັບຢູ່; ມີຂໍກະແຈແຫ່ງອຳນາດນຳອີກ, ກ່ຽວກັບດາວພະເຄາະດວງອື່ນໆ; ດັ່ງທີ່ພຣະເຈົ້າໄດ້ເປີດເຜີຍຕໍ່ອັບຣາຮາມ, ໃນຂະນະທີ່ລາວຖວາຍເຄື່ອງບູຊາຢູ່ທີ່ແທ່ນບູຊາ, ຊຶ່ງລາວໄດ້ສ້າງແດ່ພຣະຜູ້ເປັນເຈົ້າ.

ຮູບທີ 3. ຖືກເຮັດຂຶ້ນເພື່ອສະແດງເຖິງພຣະເຈົ້າ, ປະທັບນັ່ງຢູ່ເທິງພຣະບັນລັງຂອງພຣະອົງ, ຫຸ້ມຫໍ່ດ້ວຍອຳນາດ ແລະ ສິດອຳນາດ; ໂດຍມີມົງກຸດແຫ່ງຄວາມສະຫວ່າງນິລັນດອນຢູ່ເທິງພຣະສຽນຂອງພຣະອົງ; ສະແດງເຖິງຄຳໄຂທີ່ສຳຄັນທີ່ສຸດຂອງຖານະປະໂລຫິດສັກສິດນຳອີກ, ດັ່ງທີ່ໄດ້ເປີດເຜີຍຕໍ່ອາດາມຢູ່ໃນສວນເອເດນ, ຕໍ່ເຊດນຳອີກ, ໂນອາ, ເມນຄີເສເດັກ, ອັບຣາຮາມ, ແລະ ທຸກຄົນຜູ້ທີ່ຖານະປະໂລຫິດໄດ້ຖືກເປີດເຜີຍຕໍ່.

ຮູບທີ 4. ກົງກັບຄຳຂອງເຮັບເຣີທີ່ວ່າ ຣໍຄີຢາງ, ໝາຍເຖິງຄວາມກວ້າງໃຫຍ່ໄພສານ, ຫລື ທ້ອງນະພາແຫ່ງຟ້າສະຫວັນ; ເປັນຕົວເລກນຳອີກ, ໃນພາສາເອຢິບໝາຍເຖິງໜຶ່ງພັນປີ; ກົງກັບການວັດແທກເວລາຂອງໂອລິບລິດ, ຊຶ່ງເທົ່າກັນກັບໂຄລອບໃນການໝູນວຽນຂອງມັນ ແລະ ໃນການວັດແທກເວລາຂອງມັນ.

ຮູບທີ 5. ຖືກເອີ້ນໃນພາສາເອຢິບວ່າ ອີນິຊ໌-ໂກ-ອອນ-ດອຊ໌; ນີ້ເປັນດາວພະເຄາະປົກຄອງດວງໜຶ່ງຄືກັນ, ແລະ ຖືກເອີ້ນໂດຍຊາວເອຢິບວ່າ ດວງຕາເວັນ, ແລະ ຢືມຄວາມສະຫວ່າງຈາກໂຄລອບຜ່ານທາງແຄ-ອີ-ວັນແຣຊ໌, ຊຶ່ງເປັນຂໍກະແຈທີ່ສຳຄັນ, ຫລື, ອີກຄຳໜຶ່ງ, ອຳນາດປົກຄອງ, ຊຶ່ງປົກຄອງດາວພະເຄາະຫລື ດວງດາວອື່ນໆສິບຫ້າດວງ, ດັ່ງຟະໂລອີຊີ ຫລື ດວງເດືອນນຳອີກ, ແຜ່ນດິນໂລກ ແລະ ດວງຕາເວັນໃນການໝູນວຽນປະຈຳປີຂອງມັນ. ດາວພະເຄາະດວງນີ້ໄດ້ຮັບພະລັງຂອງມັນຜ່ານ ຄລີ-ຟລອສ໌-ອີສ໌-ເອສ໌, ຫລື ຮາ-ໂຄ-ຄໍ-ບິມ, ດວງດາວທີ່ສະແດງໃຫ້ເຫັນໂດຍເລກທີ 22 ແລະ 23, ໄດ້ຮັບຄວາມສະຫວ່າງຈາກການໝູນວຽນຂອງໂຄລອບ.

ຮູບທີ 6. ສະແດງເຖິງແຜ່ນດິນໂລກນີ້ໃນສີ່ມຸມຂອງມັນ.

ຮູບທີ 7. ສະແດງເຖິງພຣະເຈົ້າປະທັບນັ່ງຢູ່ເທິງພຣະບັນລັງຂອງພຣະອົງ, ເປີດເຜີຍຜ່ານຟ້າສະຫວັນເຖິງຄຳໄຂທີ່ສຳຄັນທີ່ສຸດຂອງຖານະປະໂລຫິດ; ດັ່ງເຊັ່ນ, ເຄື່ອງໝາຍຂອງພຣະວິນຍານບໍລິສຸດ ແກ່ອັບຣາຮາມ, ເຊັ່ນກັນ, ໃນຮູບຂອງນົກເຂົາ.

ຮູບທີ 8. ບັນຈຸການຂຽນທີ່ບໍ່ສາມາດເປີດເຜີຍແກ່ໂລກ; ແຕ່ສາມາດຮັບໄດ້ຢູ່ໃນພຣະວິນຍານທີ່ສັກສິດຂອງພຣະເຈົ້າ.

ຮູບທີ 9. ບໍ່ຄວນເປີດເຜີຍໃນເວລາປະຈຸບັນ.

ຮູບທີ 10. ເຊັ່ນດຽວກັນ.

ຮູບທີ 11. ເຊັ່ນດຽວກັນ. ຖ້າຫາກໂລກສາມາດຄົ້ນພົບເລກເຫລົ່ານີ້, ກໍໃຫ້ເປັນໄປຕາມນັ້ນ. ອາແມນ.

ຮູບທີ 12, 13, 14, 15, 16, 17, 18, 19, 20, ແລະ 21 ຈະຖືກມອບໃຫ້ໃນເວລາອັນເໝາະສົມຂອງພຣະຜູ້ເປັນເຈົ້າ.

ການແປເບື້ອງເທິງໄດ້ໃຫ້ໄວ້ເທົ່າທີ່ພວກເຮົາສາມາດມີສິດມອບໃຫ້ໃນເວລາປະຈຸບັນ.

ຈ້າທັງປວງ, ຊຶ່ງຢູ່ໃນຫ້ອງນະພາແຫ່ງຟ້າສະຫວັນ.

14 ແລະ ເປັນຕອນກາງຄືນເມື່ອພຣະຜູ້ເປັນເຈົ້າໄດ້ກ່າວຖ້ອຍຄຳເຫລົ່ານີ້ກັບຂ້າພະເຈົ້າວ່າ: ເຮົາຈະ [ກ]ຂະຫຍາຍເຊື້ອສາຍຂອງເຈົ້າ, ແລະ [ຂ]ລູກຫລານຂອງເຈົ້າຫລັງຈາກເຈົ້າ, ເໝືອນກັບສິ່ງເຫລົ່ານີ້; ແລະ ຖ້າຫາກເຈົ້າບໍ່ສາມາດນັບ [ຄ]ຈຳນວນຂອງເມັດດິນຊາຍສັນໃດ, ຈຳນວນຂອງລູກຫລານຂອງເຈົ້າກໍຈະເປັນເຊັ່ນນັ້ນສັນນັ້ນ.

15 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ອັບຣາຮາມ, ເຮົາສະແດງສິ່ງເຫລົ່ານີ້ແກ່ເຈົ້າກ່ອນເຈົ້າຈະເຂົ້າໄປໃນເອຢິບ, ເພື່ອວ່າເຈົ້າຈະໄດ້ປະກາດຖ້ອຍຄຳທັງປວງເຫລົ່ານີ້.

16 ຖ້າຫາກສອງຢ່າງນີ້ມີຢູ່, ແລະ ມີຢ່າງໜຶ່ງເໜືອອີກຢ່າງໜຶ່ງ, ຈະມີສິ່ງທີ່ຍິ່ງໃຫຍ່ກວ່າຢູ່ເໜືອມັນ; ສະນັ້ນ [ກ]ໂຄລອບຈຶ່ງເຈີດຈ້າຫລາຍທີ່ສຸດໃນໂຄຄໍບິນທັງໝົດທີ່ເຈົ້າໄດ້ເຫັນ, ເພາະວ່າມັນຢູ່ໃກ້ເຮົາທີ່ສຸດ.

17 ບັດນີ້, ຖ້າຫາກມີສອງຢ່າງ, ຢ່າງໜຶ່ງຢູ່ເໜືອອີກຢ່າງໜຶ່ງ, ແລະ ດວງເດືອນຢູ່ເໜືອແຜ່ນດິນໂລກ, ແລ້ວຈະເປັນວ່າມີດາວພະເຄາະ ຫລື ດາວດວງໜຶ່ງຢູ່ເໜືອມັນ; ແລະ ບໍ່ມີສິ່ງໃດທີ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າໄດ້ວາງແຜນຢູ່ໃນໃຈຂອງພຣະອົງວ່າຈະ [ກ]ເຮັດ ນອກຈາກສິ່ງທີ່ພຣະອົງຈະເຮັດ.

18 ເຖິງຢ່າງໃດກໍຕາມ ພຣະອົງໄດ້ສ້າງດາວທີ່ເຈີດຈ້າຫລາຍກວ່າ; ດັ່ງເຊັ່ນ, ຖ້າຫາກມີວິນຍານສອງດວງ, ເຊັ່ນກັນ, ແລະດວງໜຶ່ງຈະຮູ້ແຈ້ງກວ່າອີກດວງໜຶ່ງ, ແຕ່ວິນຍານທັງສອງນີ້, ທັງໆທີ່ວິນຍານດວງໜຶ່ງຮູ້ແຈ້ງກວ່າວິນຍານອີກດວງໜຶ່ງ, ກໍບໍ່ມີການເລີ່ມຕົ້ນ; ມັນເປັນຢູ່ມາກ່ອນ, ມັນບໍ່ມີທີ່ສຸດ, ມັນຈະເປັນຢູ່ໃນພາຍຫລັງ, ເພາະວ່າມັນຄື [ກ]ໂນລາມ, ຫລື ນິລັນດອນ.

19 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າວ່າ: ຂໍ້ເທັດຈິງສອງຢ່າງນີ້ມີຢູ່ແທ້ໆ, ຄືມີວິນຍານຢູ່ສອງດວງ, ດວງໜຶ່ງມີຄວາມຮູ້ແຈ້ງຫລາຍກວ່າອີກດວງໜຶ່ງ; ຈະມີອີກດວງໜຶ່ງທີ່ຮູ້ແຈ້ງຫລາຍກວ່າສອງດວງນີ້; ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ເຮົາ [ກ]ຮູ້ແຈ້ງຫລາຍກວ່າພວກເຂົາທັງປວງ.

20 ພຣະ ຜູ້ ເປັນ ເຈົ້າ ອົງ ເປັນ ພຣະ ເຈົ້າຂອງເຈົ້າໄດ້ [ກ]ສົ່ງທູດຂອງພຣະອົງມາປົດປ່ອຍເຈົ້າຈາກເງື້ອມມືຂອງປະໂລຫິດຂອງເອເຄນາ.

21 ເຮົາປະທັບຢູ່ທ່າມກາງພວກເຂົາທັງປວງ; ສະນັ້ນ ບັດນີ້ ເຮົາ, ຈຶ່ງໄດ້ລົງມາຫາເຈົ້າເພື່ອປະກາດແກ່ເຈົ້າເຖິງ [ກ]ວຽກງານຊຶ່ງມືຂອງເຮົາໄດ້ສ້າງ, ຊຶ່ງໃນນັ້ນ [ຂ]ປັນຍາຂອງເຮົາເກີນກວ່າພວກເຂົາທັງໝົດ, ເພາະວ່າເຮົາປົກຄອງສະຫວັນເບື້ອງເທິງ, ແລະ ໃນແຜ່ນດິນໂລກເບື້ອງລຸ່ມ, ໃນປັນຍາ ແລະ ຄວາມຮອບຄອບທັງໝົດ, ເໜືອກວ່າຜູ້ຄົນທີ່ມີຄວາມຮູ້ແຈ້ງທັງໝົດທີ່ເຈົ້າເຫັນຕັ້ງແຕ່ຕົ້ນ; ເຮົາໄດ້ລົງມາໃນຕອນຕົ້ນຢູ່ໃນທ່າມກາງຜູ້ຄົນທີ່ມີຄວາມຮູ້ແຈ້ງທັງໝົດທີ່ເຈົ້າໄດ້ເຫັນ.

22 ບັດ ນີ້ ພຣະ ຜູ້ ເປັນ ເຈົ້າ ໄດ້ ສະແດງ

14 ກ ອຣຣ 2:9.
ຂ ປຖກ 13:16; ຄພ 132:30.
ຄ ປຖກ 22:17; ຮສອ 1:10.
16 ກ ອຣຣ 3:3.
17 ກ ໂຢບ 9:4–12.
18 ກ *ໂນລາມ* ຄຳນີ້ໃນພາສາເຮັບເຣີ ໝາຍເຖິງນິລັນດອນ.
19 ກ ອຊຢ 55:8–9. ຄນພ ຮອບຮູ້ທຸກຢ່າງ.
20 ກ ອຣຣ 1:15.
21 ກ ຄພ 88:45–47; ມຊ 1:27–29.
ຂ ຄນພ ສະຕິປັນຍາ.

ໃຫ້ຂ້າພະເຈົ້າ, ອັບຣາຮາມ, ເຫັນຜູ້ຄົນທີ່
ມີ [ກ]ຄວາມຮູ້ແຈ້ງຊຶ່ງຖືກຈັດໄວ້ [ຂ]ກ່ອນໂລກ
ເປັນມາ; ແລະ ໃນທ່າມກາງຜູ້ຄົນເຫລົ່ານັ້ນ
ມີຜູ້ [ຄ]ທີ່ສູງສັກ ແລະ ຍິ່ງໃຫຍ່ຢ່າງຫລວງ
ຫລາຍ;
23 ແລະ ພຣະເຈົ້າເຫັນວ່າ ຈິດວິນຍານ
ເຫລົ່ານີ້ດີຫລາຍ, ແລະ ພຣະອົງໄດ້ປະ
ທັບຢືນຢູ່ທ່າມກາງພວກເພິ່ນ ແລະ ພຣະ
ອົງໄດ້ກ່າວວ່າ: ເຮົາຈະເຮັດໃຫ້ພວກເຂົາ
ເປັນຜູ້ປົກຄອງຂອງເຮົາ; ເພາະວ່າພຣະ
ອົງໄດ້ປະທັບຢືນຢູ່ໃນທ່າມກາງຄົນເຫລົ່າ
ນັ້ນທີ່ເປັນວິນຍານ, ແລະ ພຣະອົງເຫັນວ່າ
ພວກເພິ່ນດີ; ແລະ ພຣະອົງໄດ້ກ່າວກັບຂ້າ
ພະເຈົ້າວ່າ: ອັບຣາຮາມ, ເຈົ້າເປັນຄົນໜຶ່ງ
ໃນນັ້ນ; ເຈົ້າ [ກ]ຖືກເລືອກກ່ອນເຈົ້າໄດ້ມາ
ເກີດ.
24 ແລະ ມີ [ກ]ອົງໜຶ່ງຢືນຢູ່ທ່າມກາງພວກ
ເພິ່ນທີ່ຄ້າຍຄືກັບພຣະເຈົ້າ, ແລະ ເພິ່ນ
ໄດ້ກ່າວກັບຜູ້ຄົນທີ່ຢູ່ກັບເພິ່ນວ່າ: ພວກ
ເຮົາຈະລົງໄປ, ເພາະວ່າມີບ່ອນວ່າງຢູ່ທີ່
ນັ້ນ, ແລະ ພວກເຮົາຈະນຳພາກສ່ວນຂອງ
ສານເຫລົ່ານີ້ໄປ, ແລະ [ຂ]ພວກເຮົາຈະສ້າງ
[ຄ]ແຜ່ນດິນໂລກໜ່ວຍໜຶ່ງບ່ອນທີ່ວິນຍານ
ເຫລົ່ານີ້ຈະໄດ້ອາໄສຢູ່;
25 ແລະ ພວກເຮົາຈະ [ກ]ພິສູດພວກເຂົາ
ໂດຍວິທີນີ້, ເພື່ອເບິ່ງວ່າພວກເຂົາຈະ
[ຂ]ເຮັດທຸກສິ່ງທັງປວງສິ່ງໃດກໍຕາມທີ່ພຣະ
ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ
ຈະບັນຊາພວກເຂົາຫລືບໍ່;
26 ແລະ ຜູ້ທີ່ຮັກສາ [ກ]ສະພາວະທຳອິດ
ຂອງພວກເຂົາຈະໄດ້ຮັບເພີ່ມເຕີມ; ແລະ ຜູ້
ທີ່ບໍ່ຮັກສາສະພາວະທຳອິດຂອງພວກເຂົາ
ຈະບໍ່ມີລັດສະໝີພາບໃນອານາຈັກດຽວກັບ
ຜູ້ທີ່ຮັກສາສະພາວະທຳອິດຂອງພວກເຂົາ;
ແລະ ຜູ້ທີ່ຮັກສາ [ຂ]ສະພາວະທີສອງຂອງ
ພວກເຂົາຈະມີ [ຄ]ລັດສະໝີພາບເພີ່ມເຕີມ
ໃສ່ເທິງຫົວຂອງພວກເຂົາຕະຫລອດການ
ແລະ ຕະຫລອດໄປ.
27 ແລະ [ກ]ພຣະຜູ້ເປັນເຈົ້າໄດ້ກ່າວວ່າ:
ເຮົາຈະສົ່ງຜູ້ໃດໄປ? ແລະ ຜູ້ໜຶ່ງຊຶ່ງເໝືອນ
ດັ່ງ [ຂ]ບຸດມະນຸດໄດ້ຕອບວ່າ: ຂ້າພຣະອົງ
ຢູ່ນີ້ເດ, ຂໍຈົ່ງສົ່ງຂ້າພຣະອົງໄປເຖີດ. ແລະ
[ຄ]ຜູ້ໜຶ່ງອີກໄດ້ຕອບ ແລະ ກ່າວວ່າ: ຂ້າ
ພຣະອົງຢູ່ນີ້ເດ, ຂໍຈົ່ງສົ່ງຂ້າພຣະອົງໄປ
ເຖີດ. ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ:
ເຮົາຈະສົ່ງຜູ້ທຳອິດໄປ.
28 ແລະ [ກ]ຜູ້ທີສອງໄດ້ໃຈຮ້າຍ, ແລະ
ບໍ່ໄດ້ຮັກສາສະພາວະທຳອິດຂອງລາວ;
ແລະ, ໃນວັນນັ້ນ, [ຂ]ວິນຍານຢ່າງຫລວງ
ຫລາຍໄດ້ຕິດຕາມລາວໄປ.

## ບົດທີ 4

*ບັນດາພຣະເຈົ້າວາງແຜນສ້າງແຜ່ນດິນ*

---

22 ກ ຄມພ ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ.
ຂ ຄມພ ກອງປະຊຸມໃນສະຫວັນ; ຊີວິດກ່ອນເກີດ.
ຄ ຄພ 138:55.
23 ກ ອຊຢ 49:1–5; ຢມຢ 1:5. ຄມພ ແຕ່ງຕັ້ງລ່ວງໜ້າ, ການແຕ່ງຕັ້ງລ່ວງໜ້າ; ເລືອກ, ໄດ້ເລືອກ, ຖືກເລືອກ.
24 ກ ຄມພ ລູກກົກ.
ຂ ຄມພ ສ້າງ, ການສ້າງ.
ຄ ຄມພ ແຜ່ນດິນໂລກ—ໄດ້ຖືກສ້າງຂຶ້ນສຳລັບມະນຸດ.
25 ກ ຄພ 98:12–14; 124:55. ຄມພ ແຜນແຫ່ງການໄຖ່; ອຳເພີໃຈ.
ຂ ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
26 ກ ຢດ 1:6.
ຂ ຄມພ ມະຕະ, ຄວາມເປັນມະຕະ.
ຄ ຕຕ 1:2. ຄມພ ລັດສະໝີພາບ.
27 ກ ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
ຂ ຄມພ ບຸດມະນຸດ; ພຣະເຢຊູຄຣິດ.
ຄ ມຊ 4:1–2.
28 ກ ຄມພ ມານ.
ຂ ຄມພ ບຸດແຫ່ງຄວາມຈິບຫາຍ.

*ໂລກ ແລະ ຊີວິດທັງປວງຢູ່ເທິງນັ້ນ—ອະທິບາຍເຖິງແຜນຂອງພວກພຣະອົງສຳລັບການສ້າງໃນຫົກວັນ.*

1 ແລະ ຈາກນັ້ນພຣະຜູ້ເປັນເຈົ້າໄດ້ກ່າວ
ວ່າ: ໃຫ້ພວກເຮົາລົງໄປ. ແລະ ພວກພຣະ
ອົງ ໄດ້ ລົງ ໄປ ໃນ [ກ]ການ ເລີ່ມ ຕົ້ນ, ແລະ
ພວກພຣະອົງ, ນັ້ນຄືບັນດາພຣະເຈົ້າ, ໄດ້
[ຂ]ວາງລະບຽບ ແລະ ປະກອບຟ້າສະຫວັນ
ແລະ ແຜ່ນດິນໂລກ.
2 ແລະ ແຜ່ນດິນໂລກ, ຫລັງຈາກມັນໄດ້
ຖືກປະກອບ ແລ້ວ, ວ່າງເປົ່າ ແລະ ຮ້າງ,
ເພາະວ່າມັນບໍ່ມີສິ່ງອື່ນໃດນອກຈາກແຜ່ນ
ດິນໂລກ; ແລະ ຄວາມມືດຫຸ້ມຫໍ່ມະຫາສະ
ໝຸດອັນກວ້າງໃຫຍ່ໄພສານ; ແລະ ພຣະ
ວິນຍານຂອງບັນດາພຣະເຈົ້າໄດ້ [ກ]ວົນວຽນ
ຢູ່ເທິງໜ້ານ້ຳ.
3 ແລະ ພວກພຣະອົງ (ບັນດາພຣະເຈົ້າ)
ໄດ້ກ່າວວ່າ: ໃຫ້ມີຄວາມສະຫວ່າງສ່ອງ
ຂຶ້ນ; ແລະ ຄວາມສະຫວ່າງກໍສ່ອງຂຶ້ນ.
4 ແລະ ພວກພຣະອົງ (ບັນດາພຣະເຈົ້າ)
ໄດ້ເຂົ້າໃຈຄວາມສະຫວ່າງ, ເພາະວ່າ
ມັນເຈີດຈ້າ; ແລະ ພວກພຣະອົງໄດ້ແຍກ
ຄວາມສະຫວ່າງ, ຫລື ເຮັດໃຫ້ມັນແຍກ
ອອກຈາກຄວາມມືດ.
5 ແລະ ບັນດາພຣະເຈົ້າໄດ້ເອີ້ນຄວາມ
ສະຫວ່າງນັ້ນວ່າ ກາງເວັນ, ແລະ ຄວາມ
ມືດນັ້ນພວກພຣະອົງໄດ້ເອີ້ນມັນວ່າ ກາງ
ຄືນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ຈາກ
ຕອນຄ່ຳເຖິງຕອນເຊົ້າ ພວກພຣະອົງໄດ້
ເອີ້ນມັນວ່າ ກາງຄືນ; ແລະ ຈາກຕອນເຊົ້າ
ເຖິງຕອນຄ່ຳ ພວກພຣະອົງໄດ້ເອີ້ນມັນ
ວ່າ ກາງເວັນ; ແລະ ນີ້ເປັນຈຸດທຳອິດ, ຫລື
ການເລີ່ມຕົ້ນ, ຂອງສິ່ງທີ່ພວກພຣະອົງໄດ້
ເອີ້ນວ່າກາງເວັນ ແລະ ກາງຄືນ.
6 ແລະ ບັນດາພຣະເຈົ້າໄດ້ກ່າວອີກວ່າ:
ໃຫ້ [ກ]ມີຄວາມກວ້າງໃຫຍ່ໄພສານຢູ່ທ່າມ
ກາງນ້ຳ, ແລະ ມັນຈະແຍກຜືນນ້ຳອອກ
ຈາກຜືນນ້ຳ.
7 ແລະ ບັນດາພຣະເຈົ້າໄດ້ບັນຊາຄວາມ
ກວ້າງໃຫຍ່ໄພສານ, ເພື່ອວ່າມັນຈະໄດ້
ແຍກຜືນນ້ຳທີ່ຢູ່ໃຕ້ຄວາມກວ້າງໃຫຍ່ໄພ
ສານຈາກຜືນນ້ຳທີ່ຢູ່ເທິງຄວາມກວ້າງໃຫຍ່
ໄພສານ; ແລະ ກໍເປັນດັ່ງນັ້ນ, ແມ່ນແຕ່
ພວກພຣະອົງໄດ້ບັນຊາ.
8 ແລະ ບັນດາພຣະເຈົ້າໄດ້ເອີ້ນຄວາມ
ກວ້າງໃຫຍ່ໄພສານ, ວ່າ [ກ]ຟ້າສະຫວັນ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ຈາກຕອນ
ຄ່ຳເຖິງຕອນເຊົ້າ ຖືກເອີ້ນວ່າກາງຄືນ;
ແລະ ເຫດການໄດ້ບັງເກີດຂຶ້ນຄື ຈາກຕອນ
ເຊົ້າເຖິງຕອນຄ່ຳ ຖືກເອີ້ນວ່າກາງເວັນ;
ແລະ ນີ້ເປັນຊ່ວງ [ຂ]ເວລາທີສອງທີ່ຖືກເອີ້ນ
ວ່າກາງຄືນ ແລະ ກາງເວັນ.
9 ແລະ ບັນດາພຣະເຈົ້າໄດ້ບັນຊາ, ໂດຍ
ກ່າວວ່າ: ໃຫ້ [ກ]ນ້ຳທີ່ຢູ່ລຸ່ມຟ້າສະຫວັນ ມາ
ໂຮມກັນຢູ່ບ່ອນ [ຂ]ດຽວ, ແລະ ໃຫ້ພື້ນດິນ
ປະກົດຂຶ້ນ; ແລະ ກໍເປັນດັ່ງນັ້ນດັ່ງທີ່ມັນຖືກ
ບັນຊາ;
10 ແລະ ບັນດາພຣະເຈົ້າໄດ້ປະກາດພື້ນ
ດິນແຫ້ງ, ວ່າເປັນແຜ່ນດິນ; ແລະ ນ້ຳທີ່ມາ
ໂຮມກັນຢູ່ບ່ອນດຽວ, ພວກພຣະອົງໄດ້ປະ
ກາດວ່າ, [ກ]ມະຫາສະໝຸດ; ແລະ ບັນດາ
ພຣະເຈົ້າເຫັນວ່າ ມັນໄດ້ເຊື່ອຟັງ.
11 ແລະ ບັນດາພຣະເຈົ້າໄດ້ກ່າວວ່າ:

**4** 1 *ກ* ປຖກ 1:1; ມຊ 2:1.
*ຂ* ຄມພ ສ້າງ, ການສ້າງ.
2 *ກ* ປຖກ 1:2; ມຊ 2:2.
6 *ກ* ປຖກ 1:4–6; ມຊ 2:4.
8 *ກ* ຄມພ ສະຫວັນ.
*ຂ* ປຖກ 1:8.
9 *ກ* ອມ 9:6; ມຊ 2:7.
*ຂ* ປຖກ 1:9.
10 *ກ* ປຖກ 1:10; ອຣຣ 4:22.

ໃຫ້ ພວກ ເຮົາ ຕຽມ ແຜ່ນ ດິນ ໂລກ ເພື່ອ ໃຫ້
ເກີດ [ກ]ພືດ ພັນ ທຸກ ຊະ ນິດ; ທັງ ແນວ ເມັດ
ແລະ ແນວ ເປັນ ໝາກ, ຕາມ ຊະ ນິດ ຂອງ
ມັນ; ຕົ້ນໄມ້ເກີດໝາກ, ຊຶ່ງເມັດຂອງມັນຢູ່
ໃນຕົວຂອງມັນເອງຢູ່ ເທິງ ແຜ່ນ ດິນ ໂລກ;
ແລະ ກໍເປັນ ດັ່ງນັ້ນ ແມ່ນແຕ່ດັ່ງທີ່ມັນຖືກ
ບັນຊາ.
12 ແລະ ບັນດາພຣະເຈົ້າໄດ້ຈັດລະບຽບ
ແຜ່ນດິນໂລກເພື່ອໃຫ້ເກີດພືດພັນທຸກຊະ
ນິດຈາກເມັດຂອງມັນເອງ, ແນວເປັນເມັດ
ກໍຈາກເມັດຂອງມັນ, ແລະ ແນວເປັນໝາກ
ກໍຈາກໝາກຂອງມັນ, ອອກເມັດຕາມຊະ
ນິດຂອງມັນ; ແລະ ແຜ່ນດິນໂລກຈະເກີດ
ຕົ້ນໄມ້ຕາມເມັດຂອງມັນ, ອອກໝາກ, ຊຶ່ງ
ເມັດຂອງມັນຈະເກີດພຽງແຕ່ຕົ້ນໄມ້ຊະນິດ
ດຽວກັນນັ້ນ, ຕາມຊະນິດຂອງມັນ; ແລະ
ບັນດາພຣະເຈົ້າເຫັນວ່າມັນໄດ້ເຊື່ອຟັງ.
13 ແລະ ເຫດການໄດ້ບັງເກີດຂຶ້ນຄື
ພວກພຣະອົງໄດ້ນັບຈຳນວນວັນ; ຈາກ
ຕອນຄ່ຳເຖິງຕອນເຊົ້າ ພວກພຣະອົງເອີ້ນ
ວ່າກາງຄືນ; ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ຈາກຕອນເຊົ້າເຖິງຕອນຄ່ຳພວກພຣະ
ອົງໄດ້ເອີ້ນມັນວ່າກາງເວັນ; ແລະ ມັນເປັນ
ຊ່ວງເວລາທີສາມ.
14 ແລະ ບັນດາພຣະເຈົ້າໄດ້ຈັດລະບຽບ
[ກ]ຄວາມສະຫວ່າງໃນຄວາມກວ້າງໃຫຍ່ໄພ
ສານແຫ່ງຟ້າສະຫວັນ, ແລະ ເຮັດໃຫ້ມັນ
ແຍກກາງເວັນອອກຈາກກາງຄືນ; ແລະ
ໄດ້ຈັດລະບຽບມັນເພື່ອໃຫ້ເປັນເຄື່ອງໝາຍ
ແລະ ສຳລັບລະດູການ, ແລະ ສຳລັບວັນ
ແລະ ສຳລັບປີ;
15 ແລະ ໄດ້ ຈັດ ລະບຽບ ມັນ ເພື່ອ ເປັນ
ຄວາມສະຫວ່າງ ໃນຄວາມກວ້າງ ໃຫຍ່ໄພ
ສານແຫ່ງຟ້າສະຫວັນເພື່ອໃຫ້ສ່ອງແສງລົງ
ມາສູ່ແຜ່ນດິນໂລກ; ແລະ ກໍເປັນດັ່ງນັ້ນ.
16 ແລະ ບັນດາພຣະເຈົ້າໄດ້ຈັດລະບຽບ
ແສງທີ່ເຈີດຈ້າສອງດວງ, ແສງທີ່ເຈີດຈ້າ
[ກ]ຫລາຍກວ່າໃຫ້ປົກຄອງກາງເວັນ, ແລະ
ແສງທີ່ເຈີດຈ້າໜ້ອຍກວ່າໃຫ້ປົກຄອງກາງ
ຄືນ; ພ້ອມກັບແສງທີ່ເຈີດຈ້າໜ້ອຍກວ່າ
ພວກພຣະອົງໄດ້ວາງໝູ່ດວງດາວນຳອີກ;
17 ແລະ ບັນດາພຣະເຈົ້າໄດ້ວາງມັນໄວ້
ຢູ່ໃນຄວາມກວ້າງໃຫຍ່ໄພສານແຫ່ງຟ້າ
ສະຫວັນ, ເພື່ອໃຫ້ສ່ອງແສງລົງມາສູ່ແຜ່ນ
ດິນໂລກ, ແລະ ເພື່ອປົກຄອງກາງເວັນ
ແລະ ກາງຄືນ, ແລະ ເພື່ອເຮັດໃຫ້ແຍກ
ຄວາມສະຫວ່າງຈາກຄວາມມືດ.
18 ແລະ ບັນດາພຣະເຈົ້າໄດ້ເຝົ້າເບິ່ງສິ່ງ
ເຫລົ່ານັ້ນ ຊຶ່ງພຣະອົງໄດ້ບັນຊາຈົນວ່າມັນ
ເຊື່ອຟັງ.
19 ແລະ ເຫດການໄດ້ບັງເກີດຂຶ້ນຄື ຈາກ
ຕອນຄ່ຳເຖິງຕອນເຊົ້າ ເປັນກາງຄືນ; ແລະ
ເຫດການໄດ້ບັງເກີດຂຶ້ນຄື ຈາກຕອນເຊົ້າ
ເຖິງຕອນຄ່ຳ ເປັນກາງເວັນ; ແລະ ມັນເປັນ
ຊ່ວງເວລາທີສີ່.
20 ແລະ ບັນດາພຣະເຈົ້າໄດ້ກ່າວວ່າ:
ໃຫ້ພວກເຮົາຕຽມຜືນນ້ຳເພື່ອໃຫ້ເກີດສັດ
ຫລາຍຈຳພວກເກີດຢູ່ໃນນ້ຳເຕັມຢູ່ຢ່າງ
ຫລວງຫລາຍ; ແລະ ຝູງນົກ, ເພື່ອມັນຈະ
ໄດ້ບິນໄປມາໃນຄວາມກວ້າງໃຫຍ່ໄພສານ
ແຫ່ງຟ້າສະຫວັນ.
21 ແລະ ບັນດາພຣະເຈົ້າໄດ້ຕຽມຜືນນ້ຳ
ເພື່ອໃຫ້ມີ [ກ]ປາວານຂະໜາດໃຫຍ່, ແລະ
ສັດທຸກຊະນິດທີ່ເຄື່ອນຍ້າຍ, ຊຶ່ງຈະເຕັມ
ຢູ່ຢ່າງອຸດົມສົມບູນໃນຜືນນ້ຳຕາມຊະນິດ
ຂອງມັນ; ແລະ ນົກທຸກຕົວ ຕາມຊະນິດ

11 *ກ* ປຖກ 1:11–12; ມຊ 2:11–12.
14 *ກ* ຄພ 88:7–11.
16 *ກ* ປຖກ 1:16.
21 *ກ* ປຖກ 1:21; ມຊ 2:21.

ຂອງມັນ. ແລະ ບັນດາພຣະເຈົ້າເຫັນວ່າ
ມັນໄດ້ເຊື່ອຟັງ, ແລະ ວ່າແຜນຂອງພວກ
ພຣະອົງນັ້ນດີ.
22 ແລະ ບັນດາພຣະເຈົ້າໄດ້ກ່າວວ່າ:
ພວກເຮົາຈະອວຍພອນມັນ, ແລະ ເຮັດໃຫ້
ມັນພາກັນອອກແມ່ແຜ່ລູກຫລາຍຢູ່ເຕັມ
[ກ]ມະຫາສະໝຸດ; ແລະ ເຮັດໃຫ້ຝູງນົກແຜ່
ຜາຍຂະຫຍາຍພັນຫລາຍຂຶ້ນຢູ່ໃນແຜ່ນ
ດິນໂລກ.
23 ແລະ ເຫດການໄດ້ບັງເກີດຂຶ້ນ ຄື
ຈາກຕອນຄ່ຳເຖິງຕອນເຊົ້າ ຖືກເອີ້ນວ່າ
ກາງຄືນ; ແລະ ເຫດການໄດ້ບັງເກີດຂຶ້ນ
ຄື ຈາກຕອນເຊົ້າເຖິງຕອນຄ່ຳ ຖືກເອີ້ນວ່າ
ກາງເວັນ; ແລະ ມັນເປັນຊ່ວງເວລາທີຫ້າ.
24 ແລະ [ກ]ບັນດາພຣະເຈົ້າໄດ້ຕຽມແຜ່ນ
ດິນໂລກເພື່ອໃຫ້ມີສັດຈຳພວກຕ່າງໆຢູ່
ເທິງແຜ່ນດິນໂລກຕາມຊະນິດຂອງມັນ,
ສັດບ້ານ, ແລະ ສັດຍ່າງຍ້າຍເລືອຄານ,
ແລະ ສັດປ່າເກີດຂຶ້ນທົ່ວແຜ່ນດິນໂລກ
ຕາມຊະນິດຂອງມັນ; ແລະ ກໍເປັນດັ່ງນັ້ນ,
ດັ່ງທີ່ພວກພຣະອົງໄດ້ກ່າວ.
25 ແລະ ບັນດາພຣະເຈົ້າໄດ້ຈັດລະບຽບ
ແຜ່ນດິນໂລກເພື່ອໃຫ້ມີສັດປ່າເກີດຂຶ້ນ
ຕາມຊະນິດຂອງມັນ, ແລະ ສັດບ້ານຕາມ
ຊະນິດຂອງມັນ, ແລະ ທຸກຊະນິດທີ່ຍ່າງ
ຍ້າຍເລືອຄານຢູ່ເທິງແຜ່ນດິນໂລກຕາມຊະ
ນິດຂອງມັນ; ແລະ ບັນດາພຣະເຈົ້າເຫັນ
ວ່າມັນໄດ້ເຊື່ອຟັງ.
26 ແລະ ບັນດາພຣະເຈົ້າໄດ້ [ກ]ປຶກສາຫາ
ລືກັນ ແລະ ໄດ້ກ່າວວ່າ: ໃຫ້ພວກເຮົາລົງ
ໄປ ແລະ ປະກອບ [ຂ]ມະນຸດໃຫ້ເປັນ [ຄ]ຮູບ
ລັກສະນະທີ່ຄ້າຍຄືພວກເຮົາ, ຕາມລັກສະ
ນະຂອງພວກເຮົາ; ແລະ ພວກເຮົາຈະໃຫ້
ພວກເຂົາມີອຳນາດເໜືອປາໃນນ້ຳ, ແລະ
ເໜືອນົກໃນອາກາດ, ແລະ ເໜືອສັດທັງ
ໝົດ, ແລະ ເໜືອທັງແຜ່ນດິນໂລກ, ແລະ
ເໜືອສັດຍ່າງຍ້າຍເລືອຄານທຸກຊະນິດຢູ່
ເທິງແຜ່ນດິນໂລກ.
27 ດັ່ງນັ້ນ [ກ]ບັນດາພຣະເຈົ້າຈຶ່ງໄດ້ລົງ
ໄປຈັດລະບຽບມະນຸດໃນຮູບລັກສະນະ
ຂອງພວກພຣະອົງເອງ, ໃນຮູບຮ່າງລັກສະ
ນະຂອງບັນດາພຣະເຈົ້າ ພວກພຣະອົງໄດ້
ປະກອບພວກເຂົາ, ຊາຍ ແລະ ຍິງພວກ
ພຣະອົງໄດ້ປະກອບພວກເຂົາ.
28 ແລະ ບັນດາພຣະເຈົ້າໄດ້ກ່າວວ່າ:
ພວກເຮົາຈະອວຍພອນພວກເຂົາ. ແລະ
ບັນດາພຣະເຈົ້າໄດ້ກ່າວວ່າ: ພວກເຮົາ
ຈະເຮັດໃຫ້ພວກເຂົາມີລູກເຕົ້າໃຫ້ແຜ່ຂະ
ຫຍາຍ, ແລະ ປົກຄອງມັນ, ແລະ ມີອຳນາດ
ເໜືອປາໃນນ້ຳ, ແລະ ເໜືອນົກໃນອາ
ກາດ, ສັດທຸກຊະນິດທີ່ເຄື່ອນຍ້າຍຢູ່ເທິງ
ແຜ່ນດິນໂລກ.
29 ແລະ ບັນດາພຣະເຈົ້າໄດ້ກ່າວວ່າ:
ຈົ່ງເບິ່ງ, ພວກເຮົາຈະມອບພືດເປັນເມັດ
ທຸກຊະນິດ, ທີ່ຈະເກີດຢູ່ເທິງພື້ນແຜ່ນດິນ
ໂລກ, ແລະ ຕົ້ນໄມ້ທັງໝົດ ແລະ ໝາກ
ຂອງມັນໃຫ້ແກ່ພວກເຂົາ; ມັນຈະເປັນ
[ກ]ອາຫານຂອງພວກເຂົາ.
30 ແລະ ສຳລັບສັດປ່າຢູ່ໃນແຜ່ນດິນ
ໂລກ, ແລະ ສຳລັບນົກຢູ່ໃນອາກາດ, ແລະ
ສຳລັບສັດຍ່າງຍ້າຍເລືອຄານທຸກຊະນິດ
ຢູ່ໃນແຜ່ນດິນໂລກ, ຈົ່ງເບິ່ງ, ພວກເຮົາຈະ
ມອບຊີວິດໃຫ້ແກ່ມັນ, ແລະ ພ້ອມນີ້ພວກ
ເຮົາໃຫ້ຫຍ້າກັບພືດແກ່ພວກມັນເພື່ອເປັນ
ອາຫານ, ແລະ ສິ່ງເຫລົ່ານີ້ທັງໝົດຈະຖືກ
ຈັດລະບຽບໄວ້ດັ່ງນີ້.

22 *ກ* ອຣຣ 4:10.
24 *ກ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
26 *ກ* ຄມພ ຄຳແນະນຳ.
*ຂ* ຄມພ ມະນຸດ.
*ຄ* ມຊ 6:8–10.
27 *ກ* ປຖກ 1:26–27; ອຣຣ 5:7.
29 *ກ* ປຖກ 1:29–30.

# ສຳເນົາຈາກໜັງສືອັບຣາຮາມ

## ເລກທີ 3




## ຄຳອະທິບາຍ

ຮູບທີ 1. ອັບຣາຮາມນັ່ງຢູ່ເທິງບັນລັງຂອງຟາຣາໂອ, ໂດຍອັດທະຍາໄສຂອງກະສັດ, ພ້ອມດ້ວຍມົງກຸດຢູ່ເທິງຫົວຂອງເພິ່ນ, ສະແດງເຖິງຖານະປະໂລຫິດ, ເປັນເຄື່ອງໝາຍສະແດງເຖິງຝ່າຍປະທານທີ່ຍິ່ງໃຫຍ່ໃນສະຫວັນ; ພ້ອມດ້ວຍໄມ້ຄ້ອນເທົ້າແຫ່ງອຳນາດແຫ່ງຄວາມຍຸດຕິທຳ ແລະ ການພິພາກສາໃນມືຂອງເພິ່ນ.

ຮູບທີ 2. ກະສັດຟາຣາໂອ, ຊຶ່ງຊື່ຂອງເພິ່ນບອກໄວ້ດ້ວຍອັກສອນຢູ່ເທິງຫົວຂອງເພິ່ນ.

ຮູບທີ 3. ໝາຍເຖິງອັບຣາຮາມໃນເອຢິບດັ່ງທີ່ມອບໃຫ້ຢູ່ໃນຮູບທີ 10 ນຳອີກ ໃນສຳເນົາ ເລກທີ 1.

ຮູບທີ 4. ເຈົ້າຊາຍຂອງຟາຣາໂອ, ກະສັດແຫ່ງເອຢິບ, ດັ່ງທີ່ຂຽນໄວ້ຢູ່ເທິງມື.

ຮູບທີ 5. ຊູເລມ, ຫົວໜ້າຄົນຮັບໃຊ້ຂອງກະສັດ, ດັ່ງທີ່ສະແດງໂດຍຕົວອັກສອນຢູ່ເທິງມືຂອງເພິ່ນ.

ຮູບທີ 6. ໂອລິມລາ, ຂ້າໃຊ້ຄົນໜຶ່ງຂອງເຈົ້າຊາຍ.

ອັບຣາຮາມອະທິບາຍຫລັກຂອງໂຫລາສາດ, ໃນວັງຂອງກະສັດ.

31 ແລະ ບັນ ດາ ພຣະ ເຈົ້າ ໄດ້ ກ່າວ ວ່າ: ພວກ ເຮົາ ຈະ ເຮັດ ທຸກ ສິ່ງ ທີ່ ພວກ ເຮົາ ໄດ້ ກ່າວ, ແລະ ຈັດລະບຽບມັນ; ແລະ ຈົ່ງເບິ່ງ, ມັນ ຈະ ເຊື່ອ ຟັງ ຢ່າງ ເຄັ່ງຄັດ. ແລະ ເຫດ ການ ໄດ້ ບັງ ເກີດ ຂຶ້ນ ຄື ຈາກຕອນຄ່ຳເຖິງ ຕອນເຊົ້າ ຖືກເອີ້ນວ່າກາງຄືນ; ແລະ ເຫດ ການໄດ້ບັງເກີດຂຶ້ນຄື ຈາກຕອນເຊົ້າເຖິງ ຕອນຄ່ຳ ຖືກເອີ້ນວ່າກາງເວັນ; ແລະ ພວກ ພຣະອົງໄດ້ນັບເປັນຊ່ວງເວລາ [ກ]ທີຫົກ.

## ບົດທີ 5

*ພຣະເຈົ້າສຳເລັດການວາງແຜນຂອງພວກ ພຣະອົງ ໃນການ ສ້າງ ທຸກ ສິ່ງທັງປວງ— ພວກພຣະອົງ ຈັດການສ້າງອີງຕາມແຜນ ຂອງພວກພຣະອົງ—ອາດາມຕັ້ງຊື່ໃຫ້ສັດ ທຸກຊະນິດທີ່ມີຊີວິດ.*

1 ແລະ ດັ່ງນັ້ນ ພວກເຮົາຈະສຳເລັດຟ້າ ສະຫວັນ ແລະ ແຜ່ນດິນໂລກ, ແລະ ທຸກສິ່ງ ທັງປວງຂອງມັນ.

2 ແລະ ບັນດາພຣະເຈົ້າໄດ້ກ່າວໃນບັນ ດາພວກພຣະອົງເອງວ່າ: ໃນຊ່ວງເວລາ [ກ]ທີເຈັດ ພວກເຮົາຈະສິ້ນສຸດວຽກງານຂອງ ພວກເຮົາ, ຊຶ່ງພວກເຮົາໄດ້ປຶກສາກັນ; ແລະ ພວກເຮົາຈະພັກຜ່ອນໃນຊ່ວງເວລາ ທີເຈັດຈາກວຽກງານທັງໝົດຂອງພວກເຮົາ ຊຶ່ງພວກເຮົາໄດ້ປຶກສາກັນ.

3 ແລະ ບັນດາພຣະເຈົ້າໄດ້ຢຸດຕິໃນຊ່ວງ ເວລາທີເຈັດ, ເພາະວ່າໃນຊ່ວງເວລາທີ ເຈັດ ພວກພຣະອົງຈະ [ກ]ພັກຜ່ອນຈາກວຽກ ງານທັງໝົດຂອງພວກພຣະອົງ ຊຶ່ງພວກ ພຣະອົງ (ບັນດາພຣະເຈົ້າ) ໄດ້ປຶກສາກັນ ໃນບັນດາພວກພຣະອົງເອງທີ່ຈະປະກອບ; ແລະ [ຂ]ຊຳລະມັນໃຫ້ສັກສິດ. ແລະ ການ ຕັດສິນພຣະໄທຂອງພວກພຣະອົງເປັນດັ່ງ ນັ້ນໃນເວລາທີ່ພວກພຣະອົງໄດ້ປຶກສາກັນ ໃນບັນດາພວກພຣະອົງເອງທີ່ຈະປະກອບ ຟ້າສະຫວັນ ແລະ ແຜ່ນດິນໂລກ.

4 ແລະ ບັນດາພຣະເຈົ້າໄດ້ລົງໄປ ແລະ ໄດ້ປະກອບລຳດັບການສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, ເມື່ອມັນຖືກປະກອບ ໃນວັນທີ່ບັນດາພຣະເຈົ້າໄດ້ປະກອບແຜ່ນ ດິນໂລກ ແລະ ຟ້າສະຫວັນ,

5 ຕາມທຸກສິ່ງຊຶ່ງພວກພຣະອົງໄດ້ກ່າວ ກ່ຽວກັບພືດທຸກຊະນິດໃນທົ່ງ [ກ]ກ່ອນມັນ ຢູ່ໃນແຜ່ນດິນໂລກ, ແລະ ພືດພັນທຸກຊະ ນິດໃນທົ່ງກ່ອນມັນເຕີບໂຕ; ເພາະວ່າບັນ ດາພຣະເຈົ້າບໍ່ໄດ້ເຮັດໃຫ້ຝົນຕົກລົງມາ ເທິງແຜ່ນດິນໂລກ ເມື່ອພວກພຣະອົງໄດ້ ປຶກສາກັນທີ່ຈະເຮັດສິ່ງເຫລົ່ານັ້ນ, ແລະ ຍັງບໍ່ໄດ້ປະກອບມະນຸດໃຫ້ທຳມາຫາກິນ ເທື່ອ.

6 ແຕ່ ມີ ໝອກ ລອຍ ຂຶ້ນ ຈາກ ແຜ່ນ ດິນ ໂລກ, ແລະ ພົມນ້ຳໃຫ້ພື້ນດິນທັງໝົດຊຸ່ມ ຊື່ນ.

7 ແລະ [ກ]ບັນ ດາ ພຣະ ເຈົ້າ ໄດ້ ປະກອບ ມະນຸດຈາກ [ຂ]ຂີ້ດິນແຕ່ພື້ນດິນ, ແລະ ໄດ້ ເອົາ [ຄ]ວິນຍານ ຂອງລາວ ມາ (ນັ້ນຄື, ວິນ ຍານຂອງມະນຸດ), ແລະ ໃສ່ໄວ້ໃນລາວ; ແລະ ໄດ້ເປົ່າລົມໃສ່ຮູດັງຂອງລາວໃຫ້ມີຊີ ວິດ, ແລະ ຮູບປັ້ນນັ້ນກໍໄດ້ກາຍເປັນ [ງ]ຈິດ ວິນຍານທີ່ມີຊີວິດ.

---

31 *ກ* ອພຍ 31:17.
**5** 2 *ກ* ຄມພ ວັນຊະບາໂຕ.
3 *ກ* ອພຍ 20:8–11; ມຊຢ 13:16–19.
*ຂ* ຄພ 77:12.
5 *ກ* ຄມພ ການສ້າງວິນຍານ.
7 *ກ* ອຣຮ 4:26–31.
*ຂ* ມຊ 4:25; 6:59.
*ຄ* ປຖກ 2:7; ຄພ 93:33. ຄມພ ຊີວິດກ່ອນ ເກີດ; ວິນຍານ.
*ງ* ຄມພ ຈິດວິນຍານ.

8 ແລະ ບັນດາພຣະເຈົ້າໄດ້ສ້າງສວນ
ແຫ່ງໜຶ່ງ, ໃນ [ກ]ເອເດນ ຢູ່ທາງທິດຕາເວັນ
ອອກ, ແລະ ຢູ່ທີ່ນັ້ນພວກພຣະອົງໄດ້ເອົາ
ຊາຍ, ຜູ້ທີ່ພວກພຣະອົງໄດ້ເອົາວິນຍານ
ໃສ່ໄວ້ໃນຮ່າງກາຍທີ່ພວກພຣະອົງໄດ້
ປະກອບ.
9 ແລະ ຈາກພື້ນດິນບັນດາພຣະເຈົ້າໄດ້
ບັນດານໃຫ້ຕົ້ນໄມ້ທຸກຊະນິດເຕີບໂຕ ທີ່
ເພິ່ງພໍໃຈ ແລະ ສຳລັບເປັນອາຫານ; [ກ]ຕົ້ນ
ໄມ້ແຫ່ງຊີວິດ, ຢູ່ໃນກາງສວນ, ແລະ ຕົ້ນ
ໄມ້ແຫ່ງຄວາມຮູ້ດີ ແລະ ຮູ້ຊົ່ວນຳອີກ.
10 ມີແມ່ນ້ຳສາຍໜຶ່ງໄຫລອອກມາຈາກ
ສວນເອເດນ, ເພື່ອຫົດນ້ຳສວນ, ແລະ ຈາກ
ບ່ອນນັ້ນມັນໄດ້ແບ່ງອອກເປັນສີ່ສາຍ.
11 ແລະ ບັນດາພຣະເຈົ້າໄດ້ເອົາມະນຸດ
ໄປ ແລະ ວາງລາວໄວ້ໃນສວນເອເດນ,
ເພື່ອຕົກແຕ່ງ ແລະ ຮັກສາມັນ.
12 ແລະ ບັນດາພຣະເຈົ້າໄດ້ບັນຊາ
ມະນຸດ, ໂດຍກ່າວວ່າ: ໝາກໄມ້ທຸກຕົ້ນໃນ
ສວນນີ້ເຈົ້າກິນໄດ້,
13 ເວັ້ນໄວ້ແຕ່ຕົ້ນໄມ້ແຫ່ງຄວາມຮູ້ດີ
ແລະ ຮູ້ຊົ່ວ, ເຈົ້າຢ່າໄດ້ກິນໝາກໄມ້ໃນຕົ້ນ
ນັ້ນ; ເພາະວ່າຖ້າຫາກເຈົ້າຂືນກິນເມື່ອໃດ
ເຈົ້າຈະຕາຍເມື່ອນັ້ນ. ບັດນີ້ ຂ້າພະເຈົ້າ,
ອັບຣາຮາມ, ເຫັນວ່າມັນສອດຄ່ອງກັບ
[ກ]ເວລາຂອງພຣະຜູ້ເປັນເຈົ້າ, ຊຶ່ງສອດຄ່ອງ
ກັບເວລາຂອງ [ຂ]ໂຄລອບ; ເພາະວ່າຈົນເຖິງ
ບັດນີ້ ບັນດາພຣະເຈົ້າບໍ່ໄດ້ກຳນົດການຄິດ
ໄລ່ໄວ້ແກ່ອາດາມ.
14 ແລະ ບັນດາພຣະເຈົ້າໄດ້ກ່າວວ່າ:
ໃຫ້ພວກເຮົາສ້າງຜູ້ຊ່ວຍຊູທີ່ເໝາະສົມສຳ
ລັບຜູ້ຊາຍ, ເພາະວ່າບໍ່ສົມຄວນທີ່ຜູ້ຊາຍ
ຕ້ອງຢູ່ໂດດດ່ຽວຢ່າງນີ້, ສະນັ້ນ ພວກເຮົາ
ຈະສ້າງຜູ້ຊ່ວຍຊູທີ່ເໝາະສົມໃຫ້ລາວ.
15 ແລະ ບັນດາພຣະເຈົ້າໄດ້ເຮັດໃຫ້
[ກ]ອາດາມນອນຫລັບ; ແລະ ລາວໄດ້ນອນ
ຫລັບສະໜິດ, ແລະ ພວກພຣະອົງໄດ້ເອົາ
ກະດູກຂ້າງຊີກໜຶ່ງຂອງລາວອອກມາ, ແລະ
ໄດ້ເຮັດໃຫ້ເນື້ອໜັງຈອດຕິດກັນດັ່ງເດີມ;
16 ແລະ ກະດູກຂ້າງຊຶ່ງບັນດາພຣະເຈົ້າ
ໄດ້ເອົາມາຈາກຜູ້ຊາຍ, ໄດ້ປະກອບເປັນ
[ກ]ຜູ້ຍິງ, ແລະ ໄດ້ນຳນາງມາມອບໃຫ້ຜູ້
ຊາຍ.
17 ແລະ ອາດາມ ໄດ້ກ່າວ ວ່າ: ນາງ ມາ
ຈາກກະດູກຂອງເຮົາ, ແລະ ເນື້ອໜັງຂອງ
ນາງມາຈາກເນື້ອໜັງຂອງເຮົາ; ນາງຈະຖືກ
ເອີ້ນວ່າ ຜູ້ຍິງ, ເພາະວ່ານາງມາຈາກຜູ້ຊາຍ;
18 ສະນັ້ນ ຜູ້ຊາຍຈຶ່ງຈາກພໍ່ແມ່ ແລະ ໄປ
[ກ]ຕິດພັນຢູ່ກັບເມຍຂອງຕົນ; ແລະ ພວກ
ເຂົາທັງສອງກໍກາຍເປັນ [ຂ]ໜຶ່ງ.
19 ແລະ ພວກເຂົາໄດ້ເປືອຍກາຍຢູ່, ຜູ້
ຊາຍ ແລະ ເມຍຂອງລາວ, ແຕ່ພວກເຂົາບໍ່
ຮູ້ສຶກລະອາຍກັນເລີຍ.
20 ແລະ ຈາກພື້ນດິນບັນດາພຣະເຈົ້າ
ໄດ້ປັ້ນສັດທຸກຕົວໃນທົ່ງ, ແລະ ນົກທຸກຕົວ
ໃນອາກາດ; ແລະ ໄດ້ບັນຊາມັນໃຫ້ມາຫາ
ອາດາມ ເພື່ອເບິ່ງວ່າລາວຈະເອີ້ນມັນຢ່າງ
ໃດ; ແລະ ອັນໃດກໍຕາມທີ່ອາດາມເອີ້ນສັດ
ທຸກຊະນິດທີ່ມີຊີວິດເຫລົ່ານັ້ນ, ນັ້ນຈະເປັນ
ຊື່ຂອງມັນ.
21 ແລະ ອາດາມ ໄດ້ຕັ້ງຊື່ໃຫ້ສັດລ້ຽງ,
ແລະ ນົກໃນອາກາດ, ແລະ ໃຫ້ສັດປ່າທັງ
ໝົດຢູ່ໃນທົ່ງ; ແລະ ສຳລັບອາດາມ, ຈຶ່ງມີຜູ້
ຊ່ວຍຊູທີ່ເໝາະສົມແກ່ລາວ.

8 *ກ* ຄມພ ເອເດນ.
9 *ກ* ຄມພ ຕົ້ນໄມ້ແຫ່ງຊີວິດ.
13 *ກ* 2 ປຕ 3:8.
*ຂ* ອຣຮ 3:2–4.
ຄມພ ໂຄລອບ.
15 *ກ* ຄມພ ອາດາມ.
16 *ກ* ຄມພ ເອວາ.
18 *ກ* ຄພ 42:22; 49:15–16.
*ຂ* ຄມພ ແຕ່ງງານ, ການແຕ່ງງານ.

# ໂຈເຊັບ ສະມິດ—ມັດທາຍ

*ພາກສ່ວນໜຶ່ງທີ່ເອົາມາຈາກການແປພຣະຄຣິສຕະທຳຄຳພີດັ່ງທີ່ໄດ້ເປີດເຜີຍຕໍ່ໂຈເຊັບ ສະມິດ ຜູ້ເປັນສາດສະດາ ໃນປີ 1831: ມັດທາຍ 23:39 ແລະ ບົດທີ 24.*

*ພຣະເຢຊູບອກລ່ວງໜ້າເຖິງຄວາມພິນາດທີ່ຈະມາເຖິງເມືອງເຢຣູຊາເລັມ—ພຣະອົງຍັງໄດ້ປາໄສກ່ຽວກັບການສະເດັດມາຄັ້ງທີສອງຂອງບຸດມະນຸດນຳອີກ, ແລະ ຄວາມພິນາດຂອງຄົນຊົ່ວ.*

1 ເພາະເຮົາກ່າວກັບພວກເຈົ້າວ່າ ນັບ
ແຕ່ນີ້ເປັນຕົ້ນໄປພວກເຈົ້າຈະບໍ່ເຫັນເຮົາ
ອີກ ແລະ ຮູ້ວ່າເຮົາຄືຜູ້ທີ່ສາດສະດາຂຽນ
ເຖິງ, ຈົນກວ່າພວກເຈົ້າຈະອອກປາກເວົ້າ
ວ່າ: ຂໍພຣະເຈົ້າອວຍພອນທ່ານຜູ້ທີ່ [ກ]ສະ
ເດັດມາໃນພຣະນາມຂອງອົງພຣະຜູ້ເປັນ
ເຈົ້າ, ໃນໝູ່ເມກແຫ່ງຟ້າສະຫວັນ, ແລະ
ເຫລົ່າທູດຜູ້ບໍລິສຸດທັງໝົດໄດ້ຢູ່ກັບພຣະ
ອົງ. ຈາກນັ້ນສານຸສິດຂອງພຣະອົງຈຶ່ງໄດ້
ເຂົ້າໃຈວ່າ ພຣະອົງຈະສະເດັດມາເທິງ
ແຜ່ນດິນໂລກອີກ, ຫລັງຈາກທີ່ພຣະອົງຮັບ
ລັດສະໝີພາບ ແລະ ຮັບການສວມມົງກຸດ
ຢູ່ທາງເບື້ອງຂວາພຣະຫັດຂອງ [ຂ]ພຣະເຈົ້າ.
2 ແລະ ພຣະເຢຊູໄດ້ສະເດັດອອກໄປ,
ອອກໄປຈາກພຣະວິຫານນັ້ນ; ແລະ ສານຸ
ສິດຂອງພຣະອົງໄດ້ມາຫາພຣະອົງ, ເພື່ອ
ຟັງພຣະອົງ, ໂດຍກ່າວວ່າ: ພຣະອາຈານ
ເອີຍ, ຂໍຈົ່ງສະແດງແກ່ພວກຂ້ານ້ອຍກ່ຽວ
ກັບຕຶກຕ່າງໆໃນພຣະວິຫານ, ດັ່ງທີ່ພຣະ
ອົງໄດ້ກ່າວມານັ້ນ—ມັນຈະຖືກທຳລາຍ
ລົງ, ແລະ ປະໃຫ້ເປັນບ່ອນຮ້າງແກ່ພວກ
ເຈົ້າ.
3 ແລະ ພຣະເຢຊູໄດ້ກ່າວກັບພວກເຂົາ
ວ່າ: ພວກເຈົ້າໄດ້ເຫັນສິ່ງທັງໝົດເຫລົ່ານີ້
ແລ້ວບໍ່ແມ່ນບໍ? ຕາມຈິງແລ້ວ ເຮົາກ່າວກັບ
ພວກເຈົ້າວ່າ [ກ]ຫີນທຸກໆກ້ອນທີ່ຢອງທັບ
ກັນຢູ່ນີ້ຈະຖືກທຳລາຍລົງຈົນບໍ່ເຫລືອຈັກ
ກ້ອນ.
4 ແລະ ພຣະເຢຊູໄດ້ຈາກພວກເຂົາໄປ,
ແລະ ໄດ້ໄປຫາ [ກ]ພູໝາກກອກເທດ. ແລະ
ໃນຂະນະທີ່ພຣະເຢຊູນັ່ງຢູ່ເທິງພູໝາກ
ກອກເທດນັ້ນ, ສານຸສິດກໍມາຫາພຣະອົງ
ຕ່າງຫາກ, ໂດຍທູນວ່າ: ຈົ່ງບອກພວກຂ້າ
ນ້ອຍແດ່ວ່າເຫດການທັງໝົດນັ້ນຈະເກີດ
ຂຶ້ນເມື່ອໃດຊຶ່ງພຣະອົງໄດ້ກ່າວກ່ຽວກັບ
ຄວາມພິນາດຂອງພຣະວິຫານ, ແລະ ຊາວ
ຢິວ; ແລະ ແມ່ນຫຍັງຄື [ຂ]ເຄື່ອງໝາຍຂອງ
[ຄ]ການສະເດັດມາຂອງພຣະອົງ, ແລະ ຄາວ
[ງ]ສິ້ນສຸດໂລກ, ຫລື ຄວາມພິນາດຂອງ [ຈ]ຄົນ
ຊົ່ວ, ຊຶ່ງເປັນຄາວສິ້ນສຸດໂລກ?
5 ແລະ ພຣະເຢຊູໄດ້ຕອບ, ແລະ ໄດ້
ກ່າວກັບພວກເຂົາວ່າ: ຈົ່ງລະວັງໃຫ້ດີຢ່າ
ໃຫ້ຜູ້ໃດຜູ້ໜຶ່ງຫລອກລວງພວກເຈົ້າ;
6 ເພາະວ່າຫລາຍຄົນຈະມາໃນນາມ

**1** 1 *ກ* ມທ 26:64; ກຈກ 1:11.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
3 *ກ* ລກ 19:44.
4 *ກ* ຄມພ ໝາກກອກເທດ, ພູ.
*ຂ* ລກ 21:7–36; ຄພ 45:16–75. ຄມພ ເຄື່ອງໝາຍແຫ່ງການເວລາ; ຍຸກສຸດທ້າຍ.
*ຄ* ຄມພ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.
*ງ* ຄມພ ໂລກ—ທີ່ສຸດຂອງໂລກ.
*ຈ* ມລກ 4:1; ຄພ 133:64–74. ຄມພ ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.

ຂອງ ເຮົາ, ໂດຍ ກ່າວ ວ່າ—ເຮົາ ຄື ພຣະ
ຄຣິດ—ແລະ ຈະຫລອກລວງຫລາຍຄົນ
ຢ່າງຫລວງຫລາຍ;
7 ຈາກນັ້ນພວກເຂົາຈະມອບຕົວພວກ
ເຈົ້າເພື່ອໃຫ້ [ກ]ຮັບທຸກ, ແລະ ຈະຂ້າພວກ
ເຈົ້າ, ແລະ ພວກເຈົ້າຈະຖືກປະຊາຊາດທັງ
ປວງ [ຂ]ກຽດຊັງ, ເພາະເຫັນແກ່ນາມຂອງ
ເຮົາ;
8 ແລະ ຈາກນັ້ນຄົນຢ່າງຫລວງຫລາຍ
ຈະຂຸ່ນເຄືອງໃຈ, ແລະ ຈະທໍລະຍົດຕໍ່ກັນ,
ແລະ ຈະກຽດຊັງກັນ;
9 ແລະ ສາດສະດາປອມຫລາຍຄົນຈະ
ລຸກຂຶ້ນມາ, ແລະ ຈະຫລອກລວງຄົນຢ່າງ
ຫລວງຫລາຍ;
10 ແລະ ເພາະ ວ່າ ມີ ຄວາມ ຊົ່ວ ຮ້າຍ
ຫລາຍ, [ກ]ຄວາມຮັກຂອງຄົນຢ່າງຫລວງ
ຫລາຍຈະເຢັນຊາລົງ;
11 ແຕ່ຜູ້ໃດທີ່ຍັງແນ່ວແນ່ ແລະ ບໍ່ຍອມ
ແພ້, ຜູ້ນັ້ນຈະລອດ.
12 ສະນັ້ນ ເມື່ອພວກເຈົ້າເຫັນ [ກ]ຄວາມ
ໜ້າກຽດຊັງຂອງແຜ່ນດິນຮ້າງ, ຊຶ່ງກ່າວ
ໂດຍ [ຂ]ດານີເອນຜູ້ເປັນສາດສະດາ, ກ່ຽວ
ກັບຄວາມພິນາດຂອງ [ຄ]ເຢຣູຊາເລັມ, ຈາກ
ນັ້ນພວກເຈົ້າຈະຢືນຢູ່ໃນ [ງ]ສະຖານທີ່ ທີ່ສັກ
ສິດ; ຜູ້ໃດກໍຕາມທີ່ອ່ານ ກໍໃຫ້ເຂົາເຂົ້າໃຈ.
13 ເມື່ອນັ້ນຜູ້ທີ່ຢູ່ໃນແຂວງຢູດາຍໃຫ້ປົບ
ໜີໄປຍັງ [ກ]ພູ;
14 ໃຫ້ຜູ້ທີ່ຢູ່ເທິງຫລັງຄາເຮືອນຂອງຕົນ
ໜີໄປ, ແລະ ບໍ່ຕ້ອງລົງໄປເກັບເອົາສິ່ງຂອງ
ໃນເຮືອນຂອງລາວ;
15 ທັງຜູ້ທີ່ຢູ່ຕາມທົ່ງກໍບໍ່ຕ້ອງກັບຄືນເມືອ
ເອົາເສື້ອຜ້າຂອງຕົນ;
16 ແລະ ໜ້າເວດທະນາສົງສານພວກຜູ້
ຍິງ [ກ]ຖືພາ, ແລະ ແມ່ກັບລູກອ່ອນທີ່ຍັງກິນ
ນົມຢູ່ໃນວັນເຫລົ່ານັ້ນ;
17 ສະນັ້ນ, ຈົ່ງອະທິຖານທູນຕໍ່ພຣະຜູ້
ເປັນເຈົ້າເພື່ອວ່າການໜີໄປຂອງພວກເຈົ້າ
ຈະບໍ່ຖືກໃນລະດູໜາວ, ຫລື ໃນວັນຊະບາ
ໂຕ;
18 ເພາະ ເມື່ອ ນັ້ນ, ໃນ ວັນ ເຫລົ່າ ນັ້ນ,
ຄວາມທຸກຍາກລຳບາກທີ່ສຸດຈະເກີດກັບ
[ກ]ຊາວຢິວ, ແລະ ກັບຜູ້ອາໄສຂອງ [ຂ]ເຢຣູ
ຊາເລັມ, ຢ່າງບໍ່ເຄີຍຖືກສົ່ງມາກ່ອນເຖິງ
ອິດສະຣາເອນ, ໂດຍພຣະເຈົ້າ, ນັບຕັ້ງແຕ່
ການເລີ່ມຕົ້ນຂອງອານາຈັກຂອງພວກເຂົາ
ຈົນເຖິງເວລານີ້; ບໍ່ເຄີຍມີເລີຍ, ທັງຈະບໍ່
ເກີດຂຶ້ນອີກຈັກເທື່ອກັບອິດສະຣາເອນ.
19 ທຸກສິ່ງທັງປວງຊຶ່ງໄດ້ເກີດກັບພວກ
ເຂົາເປັນພຽງຈຸດເລີ່ມຕົ້ນຂອງຄວາມເສົ້າ
ສະຫລົດໃຈຊຶ່ງຈະມາເຖິງພວກເຂົາ.
20 ແລະ ຍົກເວັ້ນແຕ່ວັນເຫລົ່ານັ້ນຈະ
ຖືກເຮັດໃຫ້ສັ້ນລົງ, ຈະບໍ່ມີເນື້ອໜັງໃດ
ລອດ; ແຕ່ເພື່ອເຫັນແກ່ຜູ້ທີ່ຖືກເລືອກໄວ້,
ຕາມພັນທະສັນຍາ, ວັນເຫລົ່ານັ້ນຈະຖືກ
ເຮັດໃຫ້ສັ້ນລົງ.
21 ຈົ່ງ ເບິ່ງ, ສິ່ງ ເຫລົ່າ ນີ້ ເຮົາ ໄດ້ ກ່າວ
ກັບພວກເຈົ້າກ່ຽວກັບຊາວຢິວ; ແລະ ອີກ
ເທື່ອ ໜຶ່ງ, ຫລັງຈາກຄວາມທຸກຍາກລຳ
ບາກຂອງວັນເຫລົ່ານັ້ນ ຊຶ່ງຈະມາເຖິງເຢຣູ
ຊາເລັມ, ຖ້າຫາກຜູ້ໃດຜູ້ໜຶ່ງກ່າວກັບພວກ
ເຈົ້າ, ເບິ່ງແມ, ພຣະຄຣິດຢູ່ທີ່ນີ້, ຫລື ຢູ່ທີ່
ນັ້ນ, ຢ່າສູ່ເຊື່ອ;
22 ເພາະວ່າໃນວັນເຫລົ່ານັ້ນພຣະຄຣິດ
ປອມຈະເກີດຂຶ້ນ, ແລະ ສາດສະດາປອມ,

7 *ກ* 1 ປຕ 4:12–14.
*ຂ* ຄມພ ຂົ່ມເຫັງ, ການຂົ່ມເຫັງ.
10 *ກ* ຄພ 45:27.
12 *ກ* ດນອ 12:11.
*ຂ* ຄມພ ດານີເອນ.
*ຄ* ຄມພ ເຢຣູຊາເລັມ.
*ງ* ຄພ 101:22–25.
13 *ກ* ຄພ 133:13.
16 *ກ* ລກ 23:29–30.
18 *ກ* ຄມພ ຊາວຢິວ.
*ຂ* ຊກຍ 12; 14:1–5.

ແລະ ຈະ ສະ ແດງ ເຄື່ອງໝາຍ ແລະ ການ ແປກປະ ຫລາດ, ເຖິງຂະໜາດທີ່ວ່າຖ້າ ຫາກເປັນໄປໄດ້, ພວກເຂົາຈະຫລອກລວງ ຜູ້ທີ່ຖືກເລືອກໄວ້, ຜູ້ໄດ້ຖືກເລືອກໄວ້ຕາມ ພັນທະສັນຍາ.

23 ຈົ່ງ ເບິ່ງ, ເຮົາ ກ່າວ ສິ່ງ ເຫລົ່າ ນີ້ ກັບ ພວກເຈົ້າເພື່ອເຫັນແກ່ [ກ]ຜູ້ທີ່ຖືກເລືອກໄວ້; ແລະ ພວກເຈົ້າຈະໄດ້ຍິນເລື່ອງ [ຂ]ສົງຄາມ ນຳອີກ, ແລະ ຂ່າວລືເລື່ອງສົງຄາມ; ຈົ່ງເບິ່ງ ວ່າພວກເຈົ້າຈະບໍ່ຫຍຸ້ງຍາກໃຈ, ເພາະວ່າ ທັງໝົດທີ່ເຮົາໄດ້ບອກພວກເຈົ້າຈະບັງເກີດ ຂຶ້ນ; ແຕ່ທີ່ສຸດຈະບໍ່ເກີດຂຶ້ນເທື່ອ.

24 ຈົ່ງ ເບິ່ງ, ເຮົາ ໄດ້ບອກພວກເຈົ້າມາ ກ່ອນ;

25 ດັ່ງນັ້ນ, ຖ້າ ຫາກ ພວກ ເຂົາ ຈະ ກ່າວ ກັບພວກເຈົ້າວ່າ: ຈົ່ງເບິ່ງ, ເພິ່ນອອກໄປຖິ່ນ ແຫ້ງແລ້ງກັນດານ; ຢ່າໄປທີ່ນັ້ນ: ຈົ່ງເບິ່ງ, ເພິ່ນລີ້ຢູ່ໃນຫ້ອງ; ກໍຢ່າໄດ້ເຊື່ອ;

26 ເພາະວ່າ ຄວາມ ສະຫວ່າງຍາມເຊົ້າ ສ່ອງຈາກ [ກ]ທິດຕາເວັນອອກ, ແລະ ສ່ອງ ແສງແມ່ນແຕ່ເຖິງທິດຕາເວັນຕົກ, ແລະ ປົກ ຄຸມທົ່ວແຜ່ນດິນໂລກສັນໃດ, ການສະເດັດ ມາຂອງບຸດມະນຸດຈະເປັນສັນນັ້ນຄືກັນ.

27 ແລະ ບັດນີ້ ເຮົາຈະສະແດງຄຳອຸປະ ມາແກ່ພວກເຈົ້າ. ຈົ່ງເບິ່ງ, ໃນບ່ອນໃດທີ່ມີ ຊາກສົບ, ຝູງແຮ້ງກໍໂຮມກັນຢູ່ບ່ອນນັ້ນນຳ ກັນ; ເຊັ່ນດຽວກັນນັ້ນ ຜູ້ທີ່ເຮົາເລືອກໄວ້ ຈະ [ກ]ມາຮ່ວມກັນຈາກສີ່ສ່ວນຂອງແຜ່ນດິນ ໂລກ.

28 ແລະ ພວກ ເຂົາ ຈະ ໄດ້ ຍິນ ເລື່ອງ ສົງ ຄາມ, ແລະ ຂ່າວລືເລື່ອງສົງຄາມ.

29 ຈົ່ງເບິ່ງ ເຮົາ ກ່າວ ເພື່ອ ເຫັນ ແກ່ຜູ້ໄດ້ ຖືກ ເລືອກ ໄວ້ ຂອງ ເຮົາ; ເພາະ ວ່າປະຊາ ຊາດຈະລຸກຂຶ້ນຕໍ່ສູ້ປະຊາຊາດ, ແລະ ອາ ນາຈັກຕໍ່ ສູ້ອາ ນາຈັກ; ຈະ ມີ [ກ]ຄວາມອຶດ ຢາກ, ແລະ ພະຍາດໂລຄາ, ແລະ ແຜ່ນດິນ ໄຫວ, ໃນບ່ອນຕ່າງໆ.

30 ແລະ ອີກເທື່ອໜຶ່ງ, ເພາະວ່າຄວາມ ຊົ່ວຮ້າຍຈະມີຢູ່ຢ່າງຫລວງຫລາຍ, ຄວາມ ຮັກຂອງມະນຸດຈະເຢັນຊາ; ແຕ່ຜູ້ໃດທີ່ບໍ່ ຍອມແພ້, ຜູ້ນັ້ນຈະລອດ.

31 ແລະ ອີກເທື່ອໜຶ່ງ, ພຣະກິດຕິຄຸນ ນີ້ຂອງອານາຈັກຈະ ຖືກສັ່ງສອນໄປທົ່ວ [ກ]ໂລກ, ເພື່ອເປັນພະຍານຕໍ່ ປະຊາຊາດທັງ ປວງ, ແລະ ເມື່ອນັ້ນທີ່ສຸດຈະມາເຖິງ, ຫລື ຄວາມພິນາດຂອງຄົນຊົ່ວ;

32 ແລະ ອີກເທື່ອໜຶ່ງ ຄວາມໜ້າກຽດຊັງ ຂອງແຜ່ນດິນຮ້າງ, ຊຶ່ງກ່າວໂດຍດານີເອນ ຜູ້ເປັນສາດສະດາ, ຈະສຳເລັດຄົບຖ້ວນ.

33 ແລະ ທັນທີຫລັງຈາກຄວາມທຸກຍາກ ລຳບາກຂອງວັນເຫລົ່ານັ້ນ, [ກ]ດວງຕາເວັນ ຈະມືດດັບ, ແລະ ດວງເດືອນຈະບໍ່ສ່ອງ ແສງ, ແລະ ດວງດາວຈະຕົກລົງມາຈາກຟ້າ ສະຫວັນ, ແລະ ອຳນາດຂອງຟ້າສະຫວັນ ຈະສັ່ນສະທ້ານຫວັ່ນໄຫວ;

34 ຕາມຈິງແລ້ວ, ເຮົາກ່າວກັບພວກເຈົ້າ ວ່າ ຄົນລຸ້ນນີ້, ໃນລຸ້ນນີ້ຊຶ່ງສິ່ງເຫລົ່ານີ້ຈະ ຖືກສະແດງອອກມາ, ຈະບໍ່ສູນສິ້ນໄປຈົນ ກວ່າທຸກສິ່ງທີ່ເຮົາໄດ້ບອກພວກເຈົ້າຈະສຳ ເລັດຄົບຖ້ວນ.

35 ເຖິງແມ່ນວ່າ, ວັນເວລາຈະມາເຖິງ, ທີ່ ຟ້າສະຫວັນ ແລະ ແຜ່ນດິນໂລກຈະສູນສິ້ນ ໄປ; ແຕ່ [ກ]ຄຳຂອງເຮົາຈະບໍ່ສູນສິ້ນໄປ, ແຕ່ ທຸກສິ່ງຈະສຳເລັດຄົບຖ້ວນ.

23 *ກ* ຄມພ ຖືກເລືອກ.
*ຂ* ຄພ 45:26.
26 *ກ* ອຊກ 43:2.
27 *ກ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
29 *ກ* ຄພ 43:24–25.
31 *ກ* ມທ 28:19–20.
33 *ກ* ຢອ 2:10; ຄພ 29:14.
35 *ກ* ຄພ 1:38.

36 ແລະ, ດັ່ງ ທີ່ ເຮົາ ໄດ້ ກ່າວ ມາ ກ່ອນ,
ຫລັງຈາກ [ກ]ຄວາມທຸກຍາກລຳບາກຂອງ
ວັນເຫລົ່ານັ້ນ, ແລະ ອຳນາດຂອງຟ້າສະ
ຫວັນຈະສັ່ນສະທ້ານຫວັ່ນໄຫວ, ຈາກນັ້ນ
ເຄື່ອງໝາຍຂອງບຸດມະນຸດຈະປະກົດຂຶ້ນ
ໃນ ຟ້າສະຫວັນ, ແລະ ຈາກນັ້ນທຸກເຜົ່າ
ຂອງແຜ່ນດິນໂລກຈະເປັນທຸກ; ແລະ ພວກ
ເຂົາຈະເຫັນບຸດມະນຸດລົງ [ຂ]ມາໃນໝູ່ເມກ
ແຫ່ງຟ້າສະຫວັນ, ດ້ວຍອຳນາດ ແລະ ລັດ
ສະໝີພາບອັນຍິ່ງໃຫຍ່;
37 ແລະ ຜູ້ໃດກໍຕາມທີ່ສະສົມ [ກ]ຖ້ອຍຄຳ
ຂອງເຮົາ, ຈະບໍ່ຖືກຫລອກລວງ, ເພາະວ່າ
ບຸດມະນຸດຈະສະເດັດມາ, ແລະ ພຣະອົງ
ຈະສົ່ງ [ຂ]ເຫລົ່າທູດມາກ່ອນພຣະອົງ ດ້ວຍ
ສຽງແກດັ່ງກ້ອງສະໜັ່ນ, ແລະ ພວກເພິ່ນ
ຈະ [ຄ]ເຕົ້າໂຮມຜູ້ທີ່ຖືກເລືອກໄວ້ທີ່ເຫລືອຢູ່
ຈາກສີ່ທິດ, ຈາກສຸດຂອບຟ້າເບື້ອງນີ້ເຖິງ
ສຸດຂອບຟ້າເບື້ອງນັ້ນ.
38 ບັດນີ້ ຈົ່ງຮຽນຮູ້ຄຳອຸປະມາເລື່ອງຕົ້ນ
[ກ]ໝາກເດື່ອຄື—ເມື່ອກິ່ງກ້ານຂອງມັນຍັງ
ອ່ອນ, ແລະ ມັນເລີ່ມແຕກໃບອ່ອນ, ພວກ
ເຈົ້າກໍຮູ້ວ່າລະດູຮ້ອນໃກ້ຈະມາເຖິງ;
39 ເຊັ່ນດຽວກັນນັ້ນ, ຜູ້ທີ່ເຮົາເລືອກໄວ້,
ເມື່ອພວກເຂົາເຫັນທຸກສິ່ງທັງປວງເຫລົ່ານີ້,
ພວກເຂົາຈະຮູ້ວ່າ ພຣະອົງຢູ່ໃກ້, ແມ່ນແຕ່
ຢູ່ທີ່ປະຕູ;
40 ແຕ່ບໍ່ມີຜູ້ໃດ [ກ]ຮູ້ວ່າ ວັນ ຫລື ຊົ່ວໂມງ
ນັ້ນຈະມາເຖິງເມື່ອໃດ; ບໍ່ເລີຍ, ເຫລົ່າທູດ
ຂອງພຣະເຈົ້າໃນສະຫວັນກໍບໍ່ຮູ້, ນອກ
ຈາກພຣະບິດາຂອງເຮົາເທົ່ານັ້ນ.
41 ແຕ່ດັ່ງທີ່ວັນເວລາຂອງ [ກ]ໂນອາເປັນ
ສັນໃດ, ມັນກໍຈະເປັນສັນນັ້ນໃນຕອນບຸດ
ມະນຸດສະເດັດມາ;
42 ເພາະວ່າ ມັນ ຈະ ເປັນ ເຊັ່ນ ນັ້ນ ກັບ
ພວກເຂົາ, ດັ່ງທີ່ເຄີຍເປັນມາໃນວັນເວລາ
ກ່ອນ [ກ]ນ້ຳຖ້ວມ; ເພາະວ່າ ຈົນ ເຖິງວັນ
ໂນອາເຂົ້າໄປໃນເຮືອ, ພວກເຂົາກິນ ແລະ
ດື່ມ, ແຕ່ງງານ ແລະ ຍົກໃຫ້ແຕ່ງງານກັນ;
43 ແລະ ບໍ່ຮູ້ຈົນນ້ຳມາຖ້ວມ, ແລະ ໄດ້
ກວາດພວກເຂົາໄປທັງໝົດ; ການສະເດັດ
ມາຂອງບຸດມະນຸດກໍຈະເປັນເຊັ່ນນັ້ນຄືກັນ.
44 ຈາກນັ້ນສິ່ງທີ່ມີຂຽນໄວ້ຈະສຳເລັດ
ຄົບຖ້ວນ, ວ່າໃນ [ກ]ຍຸກສຸດທ້າຍ, ສອງຄົນ
ຈະຢູ່ໃນທົ່ງ, ຄົນໜຶ່ງຈະຖືກຮັບເອົາໄປ,
ແລະ ອີກຄົນໜຶ່ງຈະຖືກ [ຂ]ປະໄວ້;
45 ສອງຄົນຈະໂມ້ແປ້ງຢູ່, ຄົນໜຶ່ງຈະ
ຖືກຮັບເອົາໄປ, ແລະ ອີກຄົນໜຶ່ງຈະຖືກປະ
ໄວ້;
46 ແລະ ສິ່ງທີ່ເຮົາກ່າວກັບຄົນໜຶ່ງ, ເຮົາ
ກ່າວກັບມະນຸດທັງປວງ; ສະນັ້ນຈົ່ງ [ກ]ເຝົ້າ
ລະວັງ, ເພາະວ່າພວກເຈົ້າບໍ່ຮູ້ວ່າພຣະຜູ້
ເປັນເຈົ້າຂອງພວກເຈົ້າຈະສະເດັດມາຊົ່ວ
ໂມງໃດ.
47 ແຕ່ຈົ່ງຮູ້ໄວ້ວ່າ, ຖ້າຫາກເຈົ້າຂອງ
ເຮືອນທີ່ດີໄດ້ຮູ້ກ່ອນວ່າໂຈນຈະມາຍາມ
ໃດ, ລາວຈະເຝົ້າລະວັງ, ແລະ ບໍ່ໃຫ້ໂຈນ
ເຈາະເຂົ້າເຮືອນຂອງຕົນໄດ້, ແຕ່ຈະຕຽມ
ພ້ອມ.
48 ສະນັ້ນ ພວກເຈົ້າຈົ່ງຕຽມພ້ອມຄືກັນ,
ເພາະວ່າໃນໂມງເຊັ່ນນັ້ນທີ່ພວກເຈົ້າບໍ່
ຄາດຄິດ, ບຸດມະນຸດຈະສະເດັດມາ.
49 ເມື່ອນັ້ນ, ແມ່ນຜູ້ໃດທີ່ເປັນຄົນໃຊ້

36 *ກ* ຈສ—ມ 1:18.
*ຂ* ຄມພ ການສະເດັດມາຄັ້ງທີ ສອງຂອງພຣະເຢຊູຄຣິດ.
37 *ກ* ຄມພ ພຣະຄຳພີ.
*ຂ* ຄພ 29:11–15.
*ຄ* ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
38 *ກ* ຄພ 35:16.
40 *ກ* ຄພ 39:20–21; 49:7.
41 *ກ* ປຖກ 6:5.
42 *ກ* ຄມພ ນ້ຳຖ້ວມໃນວັນເວລາຂອງໂນອາ.
44 *ກ* ຄມພ ຍຸກສຸດທ້າຍ.
*ຂ* ຊກຍ 13:8.
46 *ກ* ຄມພ ຍາມ, ຄົນຍາມ.

ທີ່ [ກ]ຊື່ສັດ ແລະ ສະຫລາດ, ຜູ້ຊຶ່ງເຈົ້ານາຍ
ຂອງເຂົາໄດ້ຕັ້ງເຂົາໃຫ້ເປັນຜູ້ຮັບຜິດຊອບ
ຄົວເຮືອນຂອງເພິ່ນ, ເພື່ອແຈກອາຫານໃຫ້
ພວກເຂົາຕາມເວລາ?
50 ຄົນໃຊ້ຄົນນັ້ນຈະເປັນສຸກເມື່ອເຈົ້າ
ນາຍຂອງເຂົາ, ເມື່ອເພິ່ນກັບມາ, ຈະພົບ
ເຫັນເຂົາເຮັດໜ້າທີ່ຂອງຕົນຢູ່; ແລະ ຕາມ
ຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ, ເພິ່ນ
ຈະຕັ້ງເຂົາໃຫ້ເປັນຜູ້ຮັບຜິດຊອບຊັບສິນ
ທັງໝົດຂອງເພິ່ນ.
51 ແຕ່ຖ້າຫາກວ່າເຂົາເປັນຄົນໃຊ້ທີ່ບໍ່
ດີ ເຂົາຈະກ່າວໃນໃຈວ່າ: ພຣະຜູ້ເປັນເຈົ້າ
ຂອງຂ້າພຣະອົງ ຈຶ່ງ [ກ]ຊັກຊ້າການສະເດັດ
ມາຂອງເພິ່ນ,
52 ແລະ ຈະເລີ່ມຂ້ຽນຕີຄົນໃຊ້ດ້ວຍກັນ
ຂອງເຂົາ, ແລະ ກິນ ແລະ ດື່ມກັບຄົນຂີ້
ເມົາ,
53 ເຈົ້ານາຍຂອງຄົນໃຊ້ຄົນນັ້ນຈະມາ
ໃນວັນທີ່ເຂົາບໍ່ຄາດຄິດ, ແລະ ໃນຊົ່ວໂມງ
ນັ້ນທີ່ລາວບໍ່ຮູ້,
54 ແລະ ຈະຜ່າລາວໃຫ້ເປັນຕ່ອນໆ,
ແລະ ຈະໃຫ້ເຂົ້າສ່ວນກັບຄົນໜ້າຊື່ໃຈຄົດ;
ບ່ອນນັ້ນຈະມີການຮ້ອງໄຫ້ ແລະ [ກ]ຂົບ
ແຂ້ວຄ້ຽວຟັນ.
55 ແລະ [ກ]ທີ່ສຸດຂອງຄົນຊົ່ວຈະມາເຖິງ
ດັ່ງນັ້ນ, ຕາມຄຳທຳນາຍຂອງໂມເຊ, ທີ່
ກ່າວວ່າ: ພວກເຂົາຈະຖືກຕັດອອກຈາກ
ບັນດາຜູ້ຄົນ; ແຕ່ທີ່ສຸດຂອງແຜ່ນດິນໂລກ
ຍັງບໍ່ມາເຖິງເທື່ອ, ແຕ່ບໍ່ດົນ.

---

49 *ກ* ຄມພ ໄວ້ວາງໃຈ,
ຄວາມໄວ້ວາງໃຈ.
51 *ກ* ຄພ 45:26.
54 *ກ* ມທ 8:12.
55 *ກ* 2 ນຟ 30:10;
ຄພ 1:9–10; 29:17.
ຄມພ ໂລກ—ທີ່
ສຸດຂອງໂລກ.

# ໂຈເຊັບ ສະມິດ—ປະຫວັດ

**ພາກສ່ວນໜຶ່ງທີ່ເອົາມາຈາກປະຫວັດຂອງໂຈເຊັບ ສະມິດ, ຜູ້ເປັນສາດສະດາ**

*ໂຈເຊັບ ສະມິດ ບອກເຖິງບັນພະບຸລຸດຂອງ
ເພິ່ນ, ສະມາຊິກໃນຄອບຄົວ, ແລະ ບ່ອນຢູ່
ອາໄສຂອງເຂົາເຈົ້າໃນຕອນຕົ້ນ—ຄວາມ
ກະຕືລືລົ້ນແບບຜິດປົກກະຕິກ່ຽວກັບສາດ
ສະໜາ ທີ່ແຜ່ລາມຢູ່ໃນພາກຕາເວັນຕົກ
ຂອງລັດນິວຢອກ—ເພິ່ນຕັ້ງໃຈສະແຫວງ
ຫາປັນຍາຕາມທີ່ໄດ້ຮັບການຊີ້ນຳຈາກ
ຢາໂກໂບ—ພຣະບິດາ ແລະ ພຣະບຸດມາ
ປະກົດ, ແລະ ໂຈເຊັບຖືກເອີ້ນສູ່ການປະຕິ
ບັດສາດສະໜາກິດໃນຖານະເປັນສາດສະ
ດາ. (ຂໍ້ທີ 1–20.)*

1 ເນື່ອງຈາກມີການລາຍງານຢ່າງຫລວງ
ຫລາຍ ຊຶ່ງແຜ່ຂະຫຍາຍໄປທົ່ວ ໂດຍບຸກ
ຄົນທີ່ມີຄວາມປະສົງຮ້າຍ ແລະ ມີແຜນ
ອັນຊົ່ວຮ້າຍ, ກ່ຽວກັບ [ກ]ການເລີ່ມຕົ້ນ
ແລະ ຄວາມຈະເລີນກ້າວໜ້າຂອງ [ຂ]ສາດ
ສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່
ພົນຍຸກສຸດທ້າຍ, ຊຶ່ງທັງໝົດນີ້ໄດ້ຖືກວາງ
ແຜນ ໂດຍຜູ້ຄົ້ນຄິດ ເພື່ອທຳລາຍຊື່ສຽງ
ຂອງສາດສະໜາຈັກ ແລະ ຄວາມກ້າວໜ້າ
ຂອງມັນຢູ່ໃນໂລກ—ຂ້າພະເຈົ້າໄດ້ຖືກຈູງ
ໃຈໃຫ້ຂຽນປະຫວັດນີ້, ເພື່ອກຳຈັດຄວາມ
ຄິດຜິດຂອງສາທາລະນະຊົນ, ແລະ ໃຫ້ຂໍ້
ຄວາມເທັດຈິງແກ່ທຸກຄົນທີ່ສະແຫວງຫາ
ຄວາມຈິງ, ຕາມທີ່ໄດ້ເກີດຂຶ້ນ, ທີ່ກ່ຽວກັບ
ຕົວຂ້າພະເຈົ້າເອງ ແລະ ສາດສະໜາຈັກ,
ເທົ່າທີ່ຂ້າພະເຈົ້າມີຂໍ້ເທັດຈິງເຫລົ່ານີ້ຢູ່ນຳ
ຂ້າພະເຈົ້າ.

2 ໃນປະຫວັດນີ້ ຂ້າພະເຈົ້າຈະສະເໜີ
ເຫດການຕ່າງໆທີ່ກ່ຽວກັບສາດສະໜາຈັກ,
ໃນຄວາມຈິງ ແລະ ຄວາມຊອບທຳ, ຕາມທີ່
ໄດ້ເກີດຂຶ້ນ, ຫລື ຕາມທີ່ເປັນຢູ່, ປະຈຸບັນນີ້
ເປັນປີ [1838] ຊຶ່ງເປັນປີທີແປດນັບຕັ້ງແຕ່
[ກ]ຈັດຕັ້ງສາດສະໜາຈັກ.

3 [ກ]ຂ້າພະເຈົ້າໄດ້ເກີດໃນປີສັກກະລາດ
ໜຶ່ງພັນແປດຮ້ອຍຫ້າ, ໃນວັນທີຊາວສາມ
ເດືອນທັນວາ, ໃນໝູ່ບ້ານຊາໂຣນ, ເຂດ
ວິນເຊີ, ລັດເວີໝ້ອນ. . . . ພໍ່ຂອງຂ້າພະ
ເຈົ້າ, [ຂ]ໂຈເຊັບ ສະມິດ, ຜູ້ພໍ່, ໄດ້ຈາກລັດ
ເວີໝ້ອນ, ແລະ ຍ້າຍໄປຢູ່ເມືອງພາໄມຣາ,
ເຂດອອນແທຣິໂອ (ປະຈຸບັນນີ້ຄືເຂດ
ເວນ), ໃນລັດນິວຢອກ, ຕອນຂ້າພະເຈົ້າມີ
ອາຍຸໄດ້ສິບປີ, ຫລື ປະມານນັ້ນ. ປະມານ
ສີ່ປີຫລັງຈາກພໍ່ຂອງຂ້າພະເຈົ້າໄດ້ມາເຖິງ
ເມືອງພາໄມຣາ, ເພິ່ນໄດ້ຍ້າຍຄອບຄົວ
ຂອງເພິ່ນໄປຢູ່ເມືອງແມນເຈດສະເຕີ ໃນ
ເຂດອອນແທຣິໂອດຽວກັນນັ້ນ—

4 ຄອບຄົວຂອງເພິ່ນມີຢູ່ດ້ວຍກັນ
ສິບເອັດຄົນ, ນັ້ນຄື, ພໍ່ຂອງຂ້າພະເຈົ້າ,
[ກ]ໂຈເຊັບ ສະມິດ; [ຂ]ແມ່ຂອງຂ້າພະເຈົ້າ, ລູຊີ
ສະມິດ (ຊຶ່ງຊື່ຂອງເພິ່ນ, ກ່ອນແຕ່ງງານ,
ຄື ແມັກ, ລູກສາວຂອງໂຊໂລໂມນ ແມັກ);
ອ້າຍຂອງຂ້າພະເຈົ້າ, [ຄ]ອາລ໌ວິນ (ຜູ້ໄດ້ເສຍ

---

**1** 1*ກ* ຄມພ ການຟື້ນຟູ
ພຣະກິດຕິຄຸນ.
*ຂ* ຄມພ ສາດສະໜາຈັກ
ຂອງພຣະເຢຊູຄຣິດແຫ່ງ
ໄພ່ພົນຍຸກສຸດທ້າຍ.
2*ກ* ຄພ 20:1.
3*ກ* ຄມພ ສະມິດ,
ໂຈເຊັບ, ຜູ້ລູກ.
*ຂ* 2 ນຟ 3:15.
4*ກ* ຄມພ ສະມິດ, ໂຈເຊັບ, ຜູ້ພໍ່.
*ຂ* ຄມພ ສະມິດ, ລູຊີ ແມັກ.
*ຄ* ຄພ 137:5–6.

ຊີວິດໄປໃນວັນທີ 19 ເດືອນພະຈິກ, 1823,
ຕອນລາວມີອາຍຸໄດ້ 26 ປີ), [ງ]ໄຮຣຳ, ຕົວຂ້າ
ພະເຈົ້າເອງ, [ຈ]ແຊມໂຍ ແຮຣິສັນ, ວິວລຽມ,
ດອນ ຄາໂລສ໌; ແລະ ນ້ອງສາວຂອງຂ້າພະ
ເຈົ້າ, ໂຊໂຟຣເນຍ, ແຄເທີຣິນ, ແລະ ລູສີ.
5 ໃນຊ່ວງໜຶ່ງ ໃນ ປີທີສອງຫລັງຈາກທີ່
ພວກ ເຮົາ ໄດ້ ຍ້າຍ ມາຢູ່ ເມືອງແມນເຈດ
ສະເຕີ, ໃນສະຖານທີ່ຊຶ່ງພວກເຮົາອາໄສຢູ່
ມີຄວາມກະຕືລືລົ້ນແບບຜິດປົກກະຕິກ່ຽວ
ກັບສາດສະໜາ. ເລີ່ມຕົ້ນຈາກ ເມໂທດິສ,
ແຕ່ບໍ່ດົນ ກໍຂະຫຍາຍອອກໄປໃນບັນດານິ
ກາຍທັງໝົດໃນພາກພື້ນນັ້ນຂອງປະເທດ.
ຕາມຈິງແລ້ວ, ເບິ່ງຄືວ່າໄດ້ມີຜົນກະທົບ
ກະເທືອນໄປທົ່ວທ້ອງຖິ່ນນັ້ນຂອງປະເທດ,
ແລະ ຊຸມຊົນຢ່າງຫລວງຫລາຍ ໄດ້ ເຂົ້າ
ຮ່ວມກຸ່ມສາດສະໜາຕ່າງໆ, ຊຶ່ງໄດ້ສ້າງ
ຄວາມວຸ້ນວາຍ ແລະ ຄວາມແຕກແຍກບໍ່
ໜ້ອຍໃນບັນດາຜູ້ຄົນ, ບາງຄົນຮ້ອງຂຶ້ນ
ວ່າ, " [ກ]ເບິ່ງແມ, ບ່ອນນີ້!" ແລະ ບາງຄົນ,
"ເບິ່ງແມ, ບ່ອນນັ້ນ!" ບາງຄົນກໍໄດ້ຜິດຖຽງ
ກັນເພື່ອເມໂທດິສ, ບາງຄົນເພື່ອເພຣສ໌ໄບ
ທີຣຽນ, ແລະ ບາງຄົນເພື່ອບັບຕິດ.
6 ເພາະ, ເຖິງ ແມ່ນວ່າຄວາມຮັກອັນ
ຫລວງຫລາຍທີ່ຜູ້ປ່ຽນໃຈເຫລື້ອມໃສ ໃນ
ຄວາມ ເຊື່ອຕ່າງໆ ໄດ້ສະແດງອອກ ໃນ
ເວລາພວກເຂົາປ່ຽນໃຈເຫລື້ອມໃສ, ແລະ
ຄວາມກະຕືລືລົ້ນອັນໃຫຍ່ຫລວງທີ່ສະແດງ
ໃຫ້ປະຈັກໂດຍຄຸນພໍ່ຂອງນິກາຍຕ່າງໆ, ຜູ້
ທີ່ເປັນຕົວຕັ້ງຕົວຕີງໃນການປຸກລະດົມໃຈ
ແລະ ສົ່ງເສີມພາບທີ່ແປກປະຫລາດນີ້ອັນ
ເປັນຄວາມຮູ້ສຶກທາງສາດສະໜາ, ເພື່ອ
ເຮັດໃຫ້ທຸກຄົນປ່ຽນໃຈເຫລື້ອມໃສ, ດັ່ງທີ່
ພວກເຂົາພໍໃຈ ແລະ ເອີ້ນເຊັ່ນນັ້ນ, ໃຫ້ນັບ
ຖືນິກາຍໃດກໍໄດ້ທີ່ພວກເຂົາພໍໃຈ; ແຕ່ເມື່ອ
ຜູ້ປ່ຽນໃຈເຫລື້ອມໃສເລີ່ມແຍກຕົວອອກ
ໄປ, ບາງຄົນໄປເຂົ້າກັບກຸ່ມໜຶ່ງ ແລະ ອີກ
ບາງຄົນກໍໄປເຂົ້າກັບອີກກຸ່ມໜຶ່ງ, ປະກົດ
ວ່າຄວາມຮູ້ສຶກທີ່ເບິ່ງເໝືອນວ່າດີ ທັງຂອງ
ຄຸນພໍ່ ແລະ ຜູ້ປ່ຽນໃຈເຫລື້ອມໃສກັບເປັນ
ການສະແດງແບບທຳທ່າເທົ່ານັ້ນ ຫລາຍ
ກວ່າຄວາມຈິງໃຈ; ເພາະວ່າພາບຂອງ
ຄວາມສັບສົນຢ່າງຫລວງຫລາຍ ແລະ
ຄວາມຮູ້ສຶກບໍ່ດີໄດ້ຕາມມາ—ຄຸນພໍ່ຜິດຖຽງ
ກັບຄຸນພໍ່, ແລະ ຜູ້ປ່ຽນໃຈເຫລື້ອມໃສຜິດ
ຖຽງກັບຜູ້ປ່ຽນໃຈເຫລື້ອມໃສ; ເຖິງກັບວ່າ
ຄວາມຮູ້ສຶກທີ່ດີຂອງພວກເຂົາທີ່ມີຕໍ່ກັນ,
ຖ້າຫາກມີ, ກໍໄດ້ສູນສິ້ນໄປໃນ [ກ]ການປະ
ທະຖ້ອຍຄຳກັນ ແລະ ການໂຕ້ຖຽງກັນກ່ຽວ
ກັບຄວາມຄິດຄວາມເຫັນ.
7 ໃນ ເວລາ ນັ້ນຂ້າພະເຈົ້າມີອາຍຸໃກ້
ຈະ ເຖິງສິບຫ້າປີ. ຄອບຄົວຂອງພໍ່ຂອງ
ຂ້າ ພະ ເຈົ້າ ຖືກ ຊັກ ຈູງ ໄປ ຫາ ນິກາຍ
ເພຣສ໌ໄບທີຣຽນ, ແລະ ສີ່ຄົນໄດ້ເຂົ້າຮ່ວມ
ສາດສະໜາຈັກນັ້ນ, ນັ້ນຄື, ແມ່ຂອງຂ້າພະ
ເຈົ້າ, ລູສີ; ອ້າຍນ້ອງຂອງຂ້າພະເຈົ້າ ໄຮຣຳ
ແລະ ແຊມໂຍ ແຮຣິສັນ; ແລະ ນ້ອງສາວ
ຂອງຂ້າພະເຈົ້າ ໂຊໂຟຣເນຍ.
8 ໃນໄລຍະຂອງຄວາມສັບສົນນີ້ ຂ້າພະ
ເຈົ້າກຸ້ມໃຈຫລາຍບໍ່ຮູ້ຈັກຈະຕັດສິນໃຈ;
ເຖິງແມ່ນວ່າຄວາມຮູ້ສຶກຂອງຂ້າພະເຈົ້າ
ຈະເລິກຊຶ້ງ ແລະ ມັກຈະຕື່ນຕັນໃຈ, ແຕ່
ຂ້າພະເຈົ້າໄດ້ຮັກສາຕົນເອງໃຫ້ຫ່າງຈາກ
ກຸ່ມເຫລົ່ານັ້ນ, ເຖິງແມ່ນວ່າຂ້າພະເຈົ້າໄດ້
ໄປຮ່ວມການປະຊຸມຕ່າງໆຂອງພວກເຂົາ
ຫລາຍເທື່ອກໍຕາມ ເທົ່າທີ່ໂອກາດຈະອຳ
ນວຍ. ໃນເວລາຕໍ່ມາຈິດໃຈຂອງຂ້າພະ

4ງ ຄມພ ສະມິດ, ໄຮຣຳ.
ຈ ຄມພ ສະມິດ, ຊາ
ມູເອນ ເອັຈ.
5ກ ມທ 24:23.
6ກ ຄມພ ຂັດແຍ້ງ,
ການຂັດແຍ້ງ.

ເຈົ້າເລີ່ມເອນອຽງໄປຫານິກາຍເມໂທດິສ,
ແລະ ຂ້າພະເຈົ້າປາດຖະໜາເລັກໜ້ອຍ
ທີ່ຈະເຂົ້າຮ່ວມກັບພວກເຂົາ, ແຕ່ຄວາມ
ສັບສົນ ແລະ ການຜິດຖຽງກັນໃນບັນດາ
ນິກາຍທີ່ແຕກຕ່າງກັນນັ້ນມີຫລາຍ, ຈົນ
ວ່າເປັນໄປບໍ່ໄດ້ສຳລັບຄົນໜຸ່ມຢ່າງຂ້າພະ
ເຈົ້າ, ແລະ ບໍ່ຄຸ້ນເຄີຍກັບຜູ້ຄົນ ແລະ ເລື່ອງ
ຕ່າງໆ, ຈະສະຫລຸບໄດ້ຢ່າງແນ່ນອນແນວ
ໃດວ່າຜູ້ໃດຖືກ ແລະ ຜູ້ໃດຜິດ.
9 ບາງເທື່ອຈິດໃຈຂອງຂ້າພະເຈົ້າກໍສັບ
ສົນຫລາຍ, ສຽງປ່າວຮ້ອງ ແລະ ຄວາມວຸ້ນ
ວາຍກໍມີຢູ່ຢ່າງຫລວງຫລາຍ ແລະ ບໍ່ຢຸດ
ຢ່ອນ. ກຸ່ມເພຣສໄບທີຣຽນໄດ້ຕັ້ງໃຈຕໍ່ຕ້ານ
ກຸ່ມບັບຕິດ ແລະ ເມໂທດິສ ຫລາຍທີ່ສຸດ,
ແລະ ໄດ້ໃຊ້ພະລັງທຸກຢ່າງທັງຫາເຫດຜົນ
ແລະ ເລ່ຫລ່ຽມເພື່ອພິສູດຄວາມຜິດຂອງ
ພວກນັ້ນ, ຫລື, ຢ່າງໜ້ອຍ, ເພື່ອເຮັດໃຫ້ຜູ້
ຄົນຄິດວ່າ ພວກເຂົາເຮັດຜິດ. ອີກມຸມໜຶ່ງ,
ກຸ່ມບັບຕິດ ແລະ ເມໂທດິສກໍຄືກັນມີຄວາມ
ກະຕືລືລົ້ນຫລາຍໃນການສະຖາປະນາຄຳ
ສອນຂອງຕົນເອງຂຶ້ນ ແລະ ພິສູດວ່າຄຳ
ສອນອື່ນໆນັ້ນບໍ່ຈິງ.
10 ໃນທ່າມກາງສົງຄາມຄາລົມ ແລະ
ຄວາມວຸ້ນວາຍຂອງຄວາມຄິດຄວາມເຫັນ
ນີ້, ຂ້າພະເຈົ້າໄດ້ຖາມຕົວເອງເລື້ອຍໆວ່າ:
ເຮົາຈະເຮັດແນວໃດ? ໃນກຸ່ມທັງໝົດນີ້
ແມ່ນໃຜທີ່ [ກ]ຖືກຕ້ອງ; ຫລື, ຜິດທັງໝົດບໍ?
ຖ້າຫາກມີກຸ່ມໃດຖືກຕ້ອງ, ແລ້ວຈະເປັນ
ກຸ່ມໃດ, ແລະ ເຮົາຈະຮູ້ໄດ້ແນວໃດ?
11 ໃນຂະນະທີ່ຂ້າພະເຈົ້າຢູ່ໃນຄວາມ
ກຸ້ມໃຈຢ່າງໃຫຍ່ຫລວງ ເພາະການຜິດ
ຖຽງກັນຂອງສາດສະໜາຈັກກຸ່ມຕ່າງໆຢູ່
ນັ້ນ, ມື້ໜຶ່ງຂ້າພະເຈົ້າໄດ້ອ່ານຂໍ້ຄວາມໃນ
ສານຂອງຢາໂກໂບ, ບົດທຳອິດ ຂໍ້ທີຫ້າ, ມີ
ຄວາມວ່າ: *ຖ້າຄົນໃດໃນພວກເຈົ້າຂາດສະ
ຕິປັນຍາ, ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າຜູ້
ຊົງໂຜດປະທານໃຫ້ແກ່ຄົນທັງປວງດ້ວຍ
ພຣະກະລຸນາ, ບໍ່ຊົງກ່າວຕິ ແລະ ຜູ້ນັ້ນກໍ
ຈະໄດ້ຮັບສິ່ງທີ່ທູນຂໍ.*
12 ບໍ່ເຄີຍມີຂໍ້ຄວາມໃດໃນພຣະຄຳພີທີ່
ມີອຳນາດ ເຂົ້າເຖິງຈິດໃຈຂອງມະນຸດໄດ້
ຫລາຍເທົ່າກັບຂໍ້ຄວາມນີ້ໃນເວລານັ້ນ. ຂໍ້
ຄວາມປະກົດວ່າເຂົ້າເຖິງຄວາມຮູ້ສຶກທຸກ
ຢ່າງ ຂອງຈິດໃຈຂອງຂ້າພະເຈົ້າດ້ວຍພະ
ລັງອັນແຮງກ້າ. ຂ້າພະເຈົ້າຄິດແລ້ວຄິດ
ອີກ, ໂດຍທີ່ຮູ້ວ່າຜູ້ທີ່ຕ້ອງການປັນຍາຈາກ
ພຣະເຈົ້ານັ້ນຄືຂ້າພະເຈົ້າເອງ; ເພາະຂ້າ
ພະເຈົ້າບໍ່ຮູ້ວ່າ ຈະເຮັດແນວໃດດີນອກ
ຈາກຈະມີປັນຍາຫລາຍກວ່າທີ່ມີຢູ່ແລ້ວ,
ເພາະຂ້າພະເຈົ້າບໍ່ອາດຈະຮູ້ໄດ້ເລີຍ;
ເພາະວ່ານັກເທດສະໜາຂອງແຕ່ລະສາດ
ສະໜາຈັກແຕ່ລະຄົນກໍມີ [ກ]ຄວາມເຂົ້າໃຈ
ຂໍ້ພຣະຄຳພີໄປຕ່າງໆນາໆ ຈົນວ່າໄດ້ທຳ
ລາຍຄວາມໝັ້ນໃຈທັງໝົດໃນການຫາຄຳ
ຕອບໂດຍການຄົ້ນຫາຂໍ້ຄວາມໃນ [ຂ]ພຣະ
ຄຣິສຕະທຳຄຳພີໄປໝົດ.
13 ໃນທີ່ສຸດ ຂ້າພະເຈົ້າໄດ້ຕັດສິນໃຈ
ວ່າ ຂ້າພະເຈົ້າຕ້ອງໄດ້ເລືອກເອົາທາງໜຶ່ງ
ຄື ຈະຢູ່ໃນຄວາມບໍ່ຮູ້ຈັກ ແລະ ສັບສົນ,
ຫລື ອີກທາງໜຶ່ງແມ່ນຕ້ອງເຮັດຕາມທີ່ຢາ
ໂກໂບແນະນຳຄື ໃຫ້ທູນຂໍຈາກພຣະເຈົ້າ.
ໃນທີ່ສຸດ ຂ້າພະເຈົ້າໄດ້ຕັດສິນໃຈ “ [ກ]ທູນ
ຂໍຈາກພຣະເຈົ້າ,” ໂດຍເຫັນວ່າຖ້າຫາກ
ພຣະອົງປະທານປັນຍາໃຫ້ຄົນທີ່ຂາດປັນ
ຍາ ດ້ວຍພຣະກະລຸນາ ແລະ ບໍ່ຊົງກ່າວຕິ,
ແລ້ວຂ້າພະເຈົ້າກໍຈະລອງເບິ່ງ.

10*ກ* ຄມພ ຈິງ, ຄວາມຈິງ.
12*ກ* 1 ກຣທ 2:10–16.
*ຂ* ຄມພ ພຣະຄຣິສຕະທຳຄຳພີ.
13*ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.

14 ດັ່ງນັ້ນ, ເພື່ອໃຫ້ເປັນໄປຕາມທີ່ຂ້າພະເຈົ້າຕັ້ງໃຈໄວ້ທີ່ຈະທູນຂໍຈາກພຣະເຈົ້າ, ຂ້າພະເຈົ້າຈຶ່ງໄດ້ເຂົ້າໄປໃນປ່າເພື່ອທູນຂໍລອງເບິ່ງ. ໃນຕອນເຊົ້າທີ່ສວຍງາມ ອາກາດແຈ່ມໃສດີຂອງມື້ໜຶ່ງ, ໃນຕົ້ນລະດູໃບໄມ້ປົ່ງຂອງປີໜຶ່ງພັນແປດຮ້ອຍຊາວ. ມັນເປັນຄັ້ງທຳອິດໃນຊີວິດຂອງຂ້າພະເຈົ້າທີ່ພະຍາຍາມແບບນີ້ ເພາະວ່າໃນລະຫວ່າງຄວາມກັງວົນທັງໝົດນີ້ ຂ້າພະເຈົ້າບໍ່ເຄີຍພະຍາຍາມ [ກ]ອະທິຖານອອກສຽງມາກ່ອນເລີຍ.

15 ຫລັງຈາກໄປເຖິງຈຸດທີ່ໄດ້ໝາຍໄວ້ກ່ອນແລ້ວ ຂ້າພະເຈົ້າຫລຽວໄປອ້ອມຮອບ ແລະ ເຫັນວ່າຕົນເອງຢູ່ຕາມລຳພັງ, ແລ້ວຈຶ່ງໄດ້ຄຸເຂົ່າລົງ ແລະ ເລີ່ມຖວາຍຄວາມປາດຖະໜາຈາກໃຈຂອງຂ້າພະເຈົ້າຕໍ່ພຣະເຈົ້າ. ເມື່ອຂ້າພະເຈົ້າເລີ່ມຕົ້ນເຮັດເຊັ່ນນັ້ນ, ໃນທັນທີທັນໃດ ຂ້າພະເຈົ້າກໍຖືກອຳນາດຢ່າງໜຶ່ງມາປົກຄຸມໄວ້ໃຫ້ໝົດແຮງໄປ ແລະ ມັນມີອິດທິພົນເໜືອກວ່າຂ້າພະເຈົ້າຢ່າງໜ້າປະຫລາດ. ລີ້ນຂອງຂ້າພະເຈົ້າແຂງຈົນເວົ້າຫຍັງບໍ່ໄດ້. ຄວາມມືດອັນໜາແໜ້ນໄດ້ປົກຄຸມຂ້າພະເຈົ້າໄວ້ຊົ່ວໄລຍະໜຶ່ງ ແລະ ຄືກັບວ່າຂ້າພະເຈົ້າກຳລັງຈະຕົກໄປສູ່ຄວາມພິນາດ.

16 ແຕ່ວ່າໂດຍການໃຊ້ພະລັງທັງໝົດຂອງຂ້າພະເຈົ້າ ແລະ ໄດ້ [ກ]ທູນຂໍໃຫ້ພຣະເຈົ້າຊ່ວຍຂ້າພະເຈົ້າໃຫ້ຫລຸດພົ້ນ ຈາກອຳນາດຂອງສັດຕູທີ່ປົກຄຸມຂ້າພະເຈົ້າຢູ່ນັ້ນ, ແລະ ໃນນາທີທີ່ຂ້າພະເຈົ້າກຳລັງຈະຕົກຢູ່ໃນຄວາມສິ້ນຫວັງ ແລະ ປ່ອຍຕົວໃຫ້ໄປສູ່ຄວາມພິນາດ—ຊຶ່ງຄວາມພິນາດນັ້ນບໍ່ແມ່ນມະໂນພາບ, ແຕ່ເປັນອຳນາດຂອງຜູ້ທີ່ເປັນຢູ່ແທ້ໆຈາກໂລກທີ່ຫລຽວຫາບໍ່ເຫັນ ເປັນຜູ້ທີ່ມີອຳນາດອັນປະຫລາດ ຊຶ່ງຂ້າພະເຈົ້າບໍ່ເຄີຍພົບໃນຜູ້ໃດມາກ່ອນ—ໃນໄລຍະທີ່ຢູ່ໃນຄວາມຢ້ານກົວຫລາຍທີ່ສຸດນັ້ນ, ຂ້າພະເຈົ້າໄດ້ເຫັນ [ຂ]ແສງສະຫວ່າງເປັນເລົາລົງມາ ຢູ່ເທິງຫົວຂອງຂ້າພະເຈົ້າ, ແຈ້ງກວ່າຄວາມສະຫວ່າງຂອງ [ຄ]ດວງຕາເວັນ, ຊຶ່ງຄ່ອຍໆເລື່ອນລົງມາ ຈົນເຖິງຕົວຂອງຂ້າພະເຈົ້າ.

17 ໃນທັນທີທີ່ແສງສະຫວ່າງນັ້ນປະກົດຂຶ້ນ, ຂ້າພະເຈົ້າຮູ້ສຶກຕົວວ່າໄດ້ຫລຸດພົ້ນຈາກສັດຕູທີ່ຍຶດຂ້າພະເຈົ້າໄວ້. ເມື່ອແສງນັ້ນລົງມາເຖິງຂ້າພະເຈົ້າ, ຂ້າພະເຈົ້າ [ກ]ໄດ້ເຫັນ [ຂ]ສອງພຣະອົງປະທັບຢືນຢູ່ໃນອາກາດຊື່ຫົວຂອງຂ້າພະເຈົ້າ. ຄວາມສະຫວ່າງ ແລະ [ຄ]ລັດສະໝີພາບຂອງທັງສອງພຣະອົງນັ້ນເກີນກວ່າທີ່ຈະພັນລະນາໄດ້. ອົງໜຶ່ງໄດ້ຮັບສັ່ງກັບຂ້າພະເຈົ້າ ໂດຍເອີ້ນຊື່ຂອງຂ້າພະເຈົ້າ ແລະ ຊີ້ພຣະຫັດໄປຫາອີກອົງໜຶ່ງ ແລະ ກ່າວວ່າ—*ນີ້ຄື [ງ]ບຸດທີ່ຮັກຂອງເຮົາ. ຈົ່ງຟັງທ່ານ!*

18 ຄວາມປະສົງຂອງຂ້າພະເຈົ້າໃນການ [ກ]ທູນຖາມພຣະຜູ້ເປັນເຈົ້ານັ້ນ ກໍເພື່ອຢາກຮູ້ວ່າ ສາດສະໜາຈັກໃດໃນສາດສະໜາຈັກທັງໝົດນັ້ນຖືກຕ້ອງ ເພື່ອຂ້າພະເຈົ້າຈະໄດ້ຮູ້ວ່າ ສາດສະໜາຈັກແຫ່ງໃດທີ່ຂ້າພະເຈົ້າຄວນເຂົ້າຮ່ວມ. ສະນັ້ນໃນທັນທີທີ່ຂ້າພະເຈົ້າຮູ້ສຶກຕົວຈົນເວົ້າໄດ້ແລ້ວ, ຂ້າພະເຈົ້າຈຶ່ງທູນຖາມສອງພຣະອົງທີ່ປະທັບ

---

14 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
16 *ກ* ມຊ 1:20.
*ຂ* ກຈກ 26:13.
*ຄ* ພນມ 1:16.
17 *ກ* ຄມພ ພາບນິມິດ.
*ຂ* ກຈກ 7:55–56; ກລຊ 3:1. ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ.
*ຄ* ຄມພ ລັດສະໝີພາບ.
*ງ* ມທ 3:17; 17:5; 3 ນຟ 11:7. ຄມພ ພຣະເຢຊູຄຣິດ.
18 *ກ* ຄພ 6:11; 46:7.

ຢືນ ຢູ່ ໃນ ແສງ ສະ ຫວ່າງ ເທິງ ຫົວ ຂອງ ຂ້າ ພະ ເຈົ້າ ວ່າ ສາດສະໜາຈັກ ແຫ່ງ ໃດ ຖືກ ຕ້ອງ (ເພາະໃນເວລານັ້ນຂ້າພະເຈົ້າບໍ່ຄິດ ວ່າ ທຸກແຫ່ງຈະຜິດໝົດ)—ແລະ ວ່າຂ້າພະ ເຈົ້າຄວນເຂົ້າຮ່ວມສາດສະໜາຈັກແຫ່ງ ໃດ.

19 ຂ້າ ພະ ເຈົ້າ ໄດ້ ຮັບ ຄຳ ຕອບ ວ່າ ຂ້າ ພະເຈົ້າບໍ່ຄວນເຂົ້າຮ່ວມກັບ ສາດ ສະ ໜາ ຈັກແຫ່ງໃດເລີຍ ເພາະວ່າສາດສະໜາຈັກ ທັງໝົດນັ້ນ [ກ]ບໍ່ຖືກຕ້ອງ ແລະ ອົງທີ່ຮັບສັ່ງ ກັບຂ້າພະເຈົ້າໄດ້ກ່າວວ່າ ຄຳສອນທັງໝົດ ຂອງສາດສະໜາຈັກຕ່າງໆ ນັ້ນເປັນໜ້າ ກຽດຊັງໃນສາຍພຣະເນດຂອງພຣະອົງ; ວ່ານັກເທດສະໜາເຫລົ່ານັ້ນລ້ວນແຕ່ເຮັດ ຜິດຄື: "ພວກເຂົາ [ຂ]ຢູ່ໃກ້ເຮົາແຕ່ປາກ, ແຕ່ [ຄ]ຈິດໃຈຂອງພວກເຂົາຫ່າງໄກຈາກເຮົາ. ພວກເຂົາສິດສອນ [ງ]ບັນຍັດຂອງມະນຸດ ໂດຍມີ [ຈ]ແບບຂອງຄວາມເປັນເໝືອນພຣະ ເຈົ້າເປັນຄຳສອນ, ແຕ່ພວກເຂົາປະຕິເສດ ອຳນາດໃນນັ້ນ."

20 ພຣະອົງໄດ້ຫ້າມຂ້າພະເຈົ້າອີກວ່າ ບໍ່ ໃຫ້ເຂົ້າຮ່ວມກັບສາດສະໜາຈັກແຫ່ງໃດ ເລີຍ ແລະ ມີຫລາຍສິ່ງຫລາຍຢ່າງທີ່ພຣະ ອົງໄດ້ສັ່ງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າບໍ່ສາ ມາດຂຽນໄວ້ໃນເວລານີ້. ເມື່ອຂ້າພະເຈົ້າ ຮູ້ສຶກຕົວອີກ ກໍພົບວ່າຕົນເອງກຳລັງນອນ ຫງາຍຫລຽວແນມເບິ່ງຟ້າສະຫວັນຢູ່. ເມື່ອ ແສງສະຫວ່າງນັ້ນຈາກໄປ, ຂ້າພະເຈົ້າບໍ່ມີ ແຮງ; ແຕ່ບໍ່ດົນຂ້າພະເຈົ້າກໍຄ່ອຍໆມີແຮງ ຂຶ້ນ ແລະ ໄດ້ກັບໄປບ້ານ. ແລະ ໃນຂະນະ ທີ່ຂ້າພະເຈົ້າຢືນພິງໄຟຢູ່, ແມ່ສອບຖາມວ່າ ມີຫຍັງເກີດຂຶ້ນ. ຂ້າພະເຈົ້າໄດ້ຕອບວ່າ, "ບໍ່ມີຫຍັງດອກ, ທຸກຢ່າງດີ—ລູກສະບາຍ ດີ." ຈາກນັ້ນຂ້າພະເຈົ້າໄດ້ກ່າວກັບແມ່ ຂອງຂ້າພະເຈົ້າວ່າ, "ລູກໄດ້ຮຽນຮູ້ດ້ວຍ ຕົວເອງວ່າ ນິກາຍເພຣສໄບທີຣຽນບໍ່ຈິງ." ເບິ່ງຄືວ່າ [ກ]ຜູ້ປໍລະປັກຮູ້ຈັກວ່າ ໃນຊ່ວງໄລ ຍະຕົ້ນຊີວິດຂອງຂ້າພະເຈົ້າ, ຂ້າພະເຈົ້າ ຖືກກຳນົດໃຫ້ເປັນຜູ້ກໍ່ກວນ ແລະ ເປັນຜູ້ ສ້າງຄວາມລຳຄານໃຫ້ອານາຈັກຂອງມັນ; ຖ້າບໍ່ດັ່ງນັ້ນເປັນຫຍັງອຳນາດແຫ່ງຄວາມ ມືດຈຶ່ງມາຮ່ວມກັນຕໍ່ຕ້ານຂ້າພະເຈົ້າ? ເປັນ ຫຍັງ [ຂ]ການຕໍ່ຕ້ານ ແລະ ການຂົ່ມເຫັງຈຶ່ງ ເກີດຂຶ້ນກັບຂ້າພະເຈົ້າ, ເກືອບຕັ້ງແຕ່ຕອນ ຢູ່ໃນໄວເດັກຂອງຂ້າພະເຈົ້າ?

*ຜູ້ສັ່ງສອນບາງຄົນ ແລະ ຜູ້ປະກາດສາດ ສະໜາຄົນອື່ນໆໄດ້ປະຕິເສດເລື່ອງລາວ ກ່ຽວກັບພາບທີ່ມາໃຫ້ເຫັນຄັ້ງທຳອິດ— ການຂົ່ມເຫັງໄດ້ທະວີຂຶ້ນກັບ ໂຈເຊັບ ສະມິດ—ເພິ່ນໄດ້ເປັນພະຍານເຖິງຄວາມ ຈິງແທ້ຂອງພາບນັ້ນ. (ຂໍ້ທີ 21–26.)*

21 ສອງສາມມື້ຫລັງຈາກຂ້າພະເຈົ້າໄດ້ ເຫັນ [ກ]ພາບນັ້ນ, ບັງເອີນຂ້າພະເຈົ້າໄດ້ຢູ່ ກັບນັກເທດຄົນໜຶ່ງຂອງເມໂທດິສ, ຜູ້ມີ ບົດບາດຫລາຍໃນເລື່ອງຄວາມກະຕືລືລົ້ນ ກ່ຽວກັບສາດສະໜາດັ່ງທີ່ກ່າວຜ່ານມາ; ແລະ, ໃນຂະນະທີ່ສົນທະນາກັບເພິ່ນເລື່ອງ ສາດສະໜາ, ຂ້າພະເຈົ້າໄດ້ຖືໂອກາດເລົ່າ ໃຫ້ເພິ່ນຟັງເຖິງພາບນັ້ນທີ່ຂ້າພະເຈົ້າໄດ້

---

19 *ກ* ພສສ 14. ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ—ການປະຖິ້ມຄວາມເຊື່ອຂອງສາດສະໜາຈັກຄຣິດສະຕຽນລຸ້ນເດີມ.
*ຂ* ອຊຢ 29:13–14; ອຊກ 33:30–31.
*ຄ* ຄມພ ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ—ການປະຖິ້ມຄວາມເຊື່ອທົ່ວໄປ.
*ງ* ຕຕ 1:14; ຄພ 45:29.
*ຈ* 2 ຕມທ 3:5.
20 *ກ* ຄມພ ມານ.
*ຂ* 2 ນຟ 2:11; ຄພ 58:2–4. ຄມພ ຍາກລຳບາກ, ຄວາມຍາກລຳບາກ.
21 *ກ* ຄມພ ພາບທີ່ມາໃຫ້ເຫັນຄັ້ງທຳອິດ.

ເຫັນ. ຂ້າພະເຈົ້າປະຫລາດໃຈຫລາຍກັບ
ການປະພຶດຕົວຂອງເພິ່ນ; ເພິ່ນບໍ່ພຽງແຕ່
ຖືວ່າການບອກເລົ່າຂອງຂ້າພະເຈົ້າເປັນ
ການເວົ້າຫລິ້ນເທົ່ານັ້ນ, ແຕ່ຍັງໄດ້ໝິ່ນປະ
ໝາດນຳອີກ, ໂດຍກ່າວວ່າ ມັນເປັນຂອງ
ມານທັງໝົດ, ບໍ່ມີສິ່ງທີ່ເອີ້ນກັນວ່າ [ຂ]ພາບ
ທີ່ມາໃຫ້ເຫັນ ຫລື [ຄ]ການເປີດເຜີຍແບບນັ້ນ
ແລ້ວໃນປະຈຸບັນນີ້; ເລື່ອງເຊັ່ນນັ້ນທັງໝົດ
ໄດ້ສິ້ນສຸດໄປແລ້ວກັບເຫລົ່າອັກຄະສາວົກ,
ແລະ ວ່າຈະບໍ່ມີວັນມີສິ່ງເຫລົ່ານັ້ນອີກ.
22 ໃນບໍ່ຊ້າ ຂ້າພະເຈົ້າກໍພົບວ່າ ການ
ເລົ່າເລື່ອງຂອງຂ້າພະເຈົ້າເຮັດໃຫ້ບັນດາຜູ້
ປະກາດສາດສະໜາເກີດມີຄວາມກຽດຊັງ
ຂ້າພະເຈົ້າຢ່າງໃຫຍ່ຫລວງ, ແລະ [ກ]ການ
ຂົ່ມເຫັງກໍນັບມື້ນັບຮ້າຍແຮງຂຶ້ນຊັກໃຊ້.
ເຖິງແມ່ນວ່າ ຂ້າພະເຈົ້າເປັນພຽງເດັກນ້ອຍ
ທີ່ [ຂ]ບໍ່ມີຜູ້ໃດຮູ້ຈັກ ທີ່ມີອາຍຸພຽງແຕ່ສິບສີ່
ສິບຫ້າປີເທົ່ານັ້ນ, ແລະ ເຖິງແມ່ນວ່າຖານະ
ຄອບຄົວຂອງຂ້າພະເຈົ້າຈະຍາກຈົນ ແລະ
ຕົວຂ້າພະເຈົ້າບໍ່ໄດ້ເປັນຄົນສຳຄັນແນວໃດ
ໃນໂລກນີ້, ແຕ່ກໍຍັງມີຄົນທີ່ມີການສຶກສາ
ສູງຢ້ານລື່ນ, ແລະ ໄດ້ຍົວະຍົງໃຫ້ຄົນທົ່ວ
ໄປຕໍ່ຕ້ານຂ້າພະເຈົ້າ, ແລະ ກໍ່ໃຫ້ເກີດການ
ຂົ່ມເຫັງຢ່າງຂົມຂື່ນຂຶ້ນ; ແລະ ເລື່ອງນີ້ໄດ້
ແຜ່ຂະຫຍາຍໄປທົ່ວນິກາຍຕ່າງໆ—ທັງ
ໝົດໄດ້ລວມຫົວກັນຂົ່ມເຫັງຂ້າພະເຈົ້າ.
23 ມັນຈຶ່ງເປັນເຫດໃຫ້ຂ້າພະເຈົ້າຄິດ
ໜັກ ແລະ ຄິດຢູ່ເລື້ອຍໆຕັ້ງແຕ່ນັ້ນມາ
ວ່າ ຊ່າງປະຫລາດໃຈແທ້ໆ ທີ່ເດັກນ້ອຍ
ທີ່ບໍ່ມີໃຜຮູ້ຈັກ, ອາຍຸພຽງສິບສີ່ປີ, ແລະ ຢູ່
ໃນຖານະມີລາຍໄດ້ພຽງເລັກໜ້ອຍຈາກ
ຄວາມຈຳເປັນຕ້ອງທຳງານທຸກວັນ, ໄດ້
ເປັນຜູ້ມີຄວາມສຳຄັນພໍທີ່ຈະດຶງດູດຄວາມ
ສົນໃຈ ຂອງຜູ້ສຳຄັນຂອງສາດສະໜາຈັກ
ທີ່ກຳລັງເຕີບໂຕຂຶ້ນຢ່າງວ່ອງໄວ ທີ່ແຜ່ຂະ
ຫຍາຍຂຶ້ນໄວທີ່ສຸດໃນເວລານັ້ນ ແລະ ເຮັດ
ໃຫ້ພວກເຂົາເກີດມີຄວາມຄິດຂົມຂື່ນ ແລະ
ສົບປະໝາດຂ້າພະເຈົ້າ. ແຕ່ວ່າຈະແປກ
ຫລື ບໍ່ແປກກໍຕາມ, ແຕ່ມັນເປັນເລື່ອງຈິງ
ແລະ ເປັນເຫດໃຫ້ຂ້າພະເຈົ້າມີຄວາມໂສກ
ເສົ້າຢູ່ເລື້ອຍໆ.
24 ເຖິງຢ່າງໃດກໍຕາມ, ມັນເປັນຄວາມ
ຈິງທີ່ຂ້າພະເຈົ້າໄດ້ເຫັນພາບນັ້ນ. ຂ້າພະ
ເຈົ້າຄິດຕັ້ງແຕ່ນັ້ນມາວ່າຂ້າພະເຈົ້າຮູ້ສຶກ
ຄືກັນກັບ [ກ]ໂປໂລຫລາຍ, ເວລາທີ່ເພິ່ນ
ເປັນ [ຂ]ຈຳເລີຍຕໍ່ກະສັດອັກຄຣິປາ, ແລະ
ເລົ່າກ່ຽວກັບພາບທີ່ເພິ່ນໄດ້ເຫັນແສງສະ
ຫວ່າງ, ແລະ ໄດ້ຍິນສຽງ; ແຕ່ກໍຍັງບໍ່ມີ
ເທົ່າໃດຄົນເຊື່ອເພິ່ນ; ບາງຄົນວ່າເພິ່ນເວົ້າ
ຕົວະ, ບາງຄົນກໍວ່າເພິ່ນເປັນບ້າ; ແລະ
ເພິ່ນຖືກຫົວເຍາະເຍີ້ຍ ແລະ ໝິ່ນປະໝາດ.
ແຕ່ສິ່ງທັງໝົດນີ້ ບໍ່ອາດລ້າງຄວາມຈິງຂອງ
ພາບທີ່ເພິ່ນໄດ້ເຫັນນັ້ນ. ເພິ່ນໄດ້ເຫັນພາບ
ນັ້ນ, ເພິ່ນຮູ້ວ່າເພິ່ນໄດ້ເຫັນ, ແລະ ການ
ຂົ່ມເຫັງທັງປວງພາຍໃຕ້ສະຫວັນ ກໍບໍ່ສາ
ມາດປ່ຽນມັນໃຫ້ເປັນສິ່ງອື່ນໄດ້ ແລະ ເຖິງ
ແມ່ນວ່າຄົນເຫລົ່ານັ້ນຈະຂົ່ມເຫັງເພິ່ນຈົນ
ເຖິງແກ່ຄວາມຕາຍກໍຕາມ, ແຕ່ເພິ່ນກໍຍັງຮູ້
ແລະ ຈະຮູ້ໄປຈົນສິ້ນລົມຫາຍໃຈວ່າ ເພິ່ນ
ໄດ້ເຫັນແສງສະຫວ່າງ ແລະ ໄດ້ຍິນສຽງ
ເວົ້າກັບເພິ່ນ ແລະ ໂລກທັງໝົດນີ້ຈະເຮັດ
ໃຫ້ເພິ່ນຕົວະ ຫລື ເຊື່ອວ່າເປັນຢ່າງອື່ນໄປ
ບໍ່ໄດ້.
25 ມັນໄດ້ເປັນດັ່ງນັ້ນກັບຂ້າພະເຈົ້າ. ຂ້າ
ພະເຈົ້າໄດ້ເຫັນແສງນັ້ນແທ້ໆ ແລະ ທ່າມ
ກາງຂອງແສງນັ້ນຂ້າພະເຈົ້າໄດ້ເຫັນສອງ

21 *ຂ* ຄມພ ພາບນິມິດ.
*ຄ* ຄມພ ເປີດເຜີຍ, ການເປີດເຜີຍ.
22 *ກ* ຢກບ 5:10–11. ຄມພ ຂົ່ມເຫັງ, ການຂົ່ມເຫັງ.
*ຂ* 1 ຊມອ 16:7; ແອວ 37:35.
24 *ກ* ຄມພ ໂປໂລ.
*ຂ* ກຈກ 26.

ᵍພຣະອົງ ແລະ ທັງສອງພຣະອົງໄດ້ກ່າວ
ກັບຂ້າພະເຈົ້າແທ້ໆ ແລະ ເຖິງແມ່ນວ່າ ຂ້າ
ພະເຈົ້າຈະຖືກກຽດຊັງ ແລະ ຖືກຂົ່ມເຫັງ
ເພາະການເວົ້າວ່າ ຂ້າພະເຈົ້າໄດ້ເຫັນພາບ
ນັ້ນກໍຕາມ ແຕ່ມັນເປັນຄວາມຈິງ ແລະ
ຂະນະທີ່ຄົນຂົ່ມເຫັງຂ້າພະເຈົ້າ, ສົບປະ
ໝາດຂ້າພະເຈົ້າ, ແລະ ເວົ້າໃສ່ຮ້າຍປ້າຍສີ
ຂ້າພະເຈົ້າຕ່າງໆນາໆ ຢ່າງຜິດໆ, ມັນເຮັດ
ໃຫ້ຂ້າພະເຈົ້າຄິດຢູ່ໃນໃຈວ່າ: ເປັນຫຍັງ
ຈຶ່ງຂົ່ມເຫັງຂ້າພະເຈົ້າ ເພາະຂ້າພະເຈົ້າໄດ້
ເວົ້າຄວາມຈິງບໍ? ຂ້າພະເຈົ້າໄດ້ເຫັນພາບ
ນັ້ນແທ້ໆ ແລະ ຂ້າພະເຈົ້າແມ່ນໃຜທີ່ຈະຕໍ່
ຕ້ານພຣະເຈົ້າໄດ້, ຫລື ວ່າເປັນຫຍັງໂລກ
ຈຶ່ງຄິດຈະໃຫ້ຂ້າພະເຈົ້າປະຕິເສດສິ່ງທີ່
ຂ້າພະເຈົ້າໄດ້ເຫັນມາແທ້ໆ? ເພາະວ່າຂ້າ
ພະເຈົ້າໄດ້ເຫັນພາບນັ້ນ, ຂ້າພະເຈົ້າຈຶ່ງ
ຮູ້ ແລະ ຂ້າພະເຈົ້າຮູ້ວ່າ ພຣະເຈົ້າຮູ້ຄືກັນ
ແລະ ຂ້າພະເຈົ້າ ᵉປະຕິເສດມັນບໍ່ໄດ້ ທັງ
ຂ້າພະເຈົ້າບໍ່ກ້າປະຕິເສດ. ຢ່າງໜ້ອຍຂ້າ
ພະເຈົ້າຮູ້ວ່າ ຖ້າເຮັດແນວນັ້ນ ຂ້າພະເຈົ້າ
ຈະເຮັດໃຫ້ພຣະເຈົ້າຂຸ່ນເຄືອງ ແລະ ຂ້າ
ພະເຈົ້າຈະຕ້ອງຖືກລົງໂທດ.

26 ບັດນີ້ ຂ້າພະເຈົ້າສະບາຍໃຈແລ້ວ
ກ່ຽວກັບນິກາຍຕ່າງໆຂອງໂລກ—ມັນບໍ່
ໄດ້ເປັນໜ້າທີ່ຂອງຂ້າພະເຈົ້າທີ່ຈະເຂົ້າ
ຮ່ວມກັບນິກາຍໃດເລີຍ ແຕ່ຈະດຳເນີນຕໍ່
ໄປຕາມເຄີຍຈົນກວ່າຈະໄດ້ຮັບຄຳແນະນຳ
ເພີ່ມເຕີມ. ຂ້າພະເຈົ້າພົບເຫັນວ່າ ᵍປະຈັກ
ພະຍານຂອງຢາໂກໂບເປັນຄວາມຈິງ—
ວ່າຖ້າຄົນໃດໃນພວກເຈົ້າຂາດສະຕິປັນ
ຍາ ກໍໃຫ້ຄົນນັ້ນທູນຂໍຈາກພຣະເຈົ້າ, ແລະ
ຜູ້ຈະຊົງປະທານໃຫ້, ແລະ ບໍ່ຊົງກ່າວຕິ.

*ໂມໂຣໄນໄດ້ມາປະກົດຕໍ່ໂຈເຊັບ ສະມິດ—ຊື່ຂອງໂຈເຊັບຈະເປັນທີ່ຮູ້ຈັກທັງໃນທາງດີ ແລະ ທາງຊົ່ວໃນບັນດາປະຊາຊາດທັງປວງ—ໂມໂຣໄນບອກເພິ່ນເຖິງພຣະຄຳພີມໍມອນ ແລະ ການພິພາກສາຈາກພຣະຜູ້ເປັນເຈົ້າທີ່ຈະມາເຖິງ ແລະ ອ້າງເຖິງພຣະຄຳພີຫລາຍຕອນ—ບ່ອນເຊື່ອງແຜ່ນຈາລຶກຄຳໄດ້ຖືກເປີດເຜີຍ—ໂມໂຣໄນສືບຕໍ່ແນະນຳສາດສະດາຕໍ່ໄປ. (ຂໍ້ທີ 27–54.)*

27 ຂ້າພະເຈົ້າໄດ້ເຮັດວຽກງານໄປ
ເລື້ອຍໆດັ່ງທີ່ເຄີຍເຮັດມາ ຈົນເຖິງວັນທີ
ຊາວເອັດ ເດືອນກັນຍາ, ປີໜຶ່ງພັນແປດ
ຮ້ອຍຊາວສາມ, ໂດຍທົນຕໍ່ການຂົ່ມເຫັງ
ຢ່າງໜັກຕະຫລອດເວລາດ້ວຍນ້ຳມືຂອງ
ຄົນທຸກຊັ້ນ ທັງຄົນທີ່ເຄັ່ງຄັດທາງສາດ
ສະໜາ ແລະ ຄົນບໍ່ມີສາດສະໜານຳອີກ
ເພາະຂ້າພະເຈົ້າຍັງຢືນຢັນຕໍ່ໄປວ່າ ຂ້າພະ
ເຈົ້າໄດ້ເຫັນພາບນັ້ນແທ້.

28 ໃນໄລຍະເວລາລະຫວ່າງຂ້າພະ
ເຈົ້າໄດ້ເຫັນພາບນິມິດ ຈົນເຖິງປີໜຶ່ງພັນ
ແປດຮ້ອຍຊາວສາມ—ໂດຍທີ່ຖືກຫ້າມບໍ່
ໃຫ້ເຂົ້າຮ່ວມກັບສາດສະໜາຈັກແຫ່ງໃດ
ໃນສະໄໝນັ້ນ ແລະ ໂດຍທີ່ອາຍຸຍັງນ້ອຍ
ຢູ່ ແລະ ຖືກຂົ່ມເຫັງຈາກຄົນທີ່ໜ້າຈະເປັນ
ເພື່ອນ ແລະ ໜ້າຈະປະຕິບັດຕໍ່ຂ້າພະເຈົ້າ
ດ້ວຍຄວາມກະລຸນາ, ແລະ ຖ້າຫາກພວກ
ເຂົາຄິດວ່າ ຂ້າພະເຈົ້າຖືກຫລອກລວງກໍ
ຄວນພະຍາຍາມຊ່ວຍເຫລືອຂ້າພະເຈົ້າ
ດ້ວຍຄວາມຮັກ ແລະ ດ້ວຍວິທີທີ່ເໝາະ
ສົມ—ຂ້າພະເຈົ້າຖືກປ່ອຍໄວ້ກັບ ᵍການລໍ້
ລວງນາໆປະການ ແລະ ຂ້າພະເຈົ້າໄດ້ຄົບ
ຄ້າກັບສັງຄົມທຸກຊັ້ນ. ຂ້າພະເຈົ້າຕົກຢູ່ໃນ
ຄວາມຜິດຢ່າງໂງ່ຈ້າ ແລະ ສະແດງຄວາມ
ອ່ອນແອຂອງເດັກນ້ອຍ ແລະ ຄວາມຜິດ

25 *ກ* ຈສ—ປ 1:17.
*ຂ* ຄນພ ກ້າຫານ, ຄວາມ
ກ້າຫານ, ຢ່າງກ້າຫານ;
ຊື່ສັດ, ຄວາມຊື່ສັດ.
26 *ກ* ຢກບ 1:5–7.
28 *ກ* ຄນພ ລໍ້ລວງ, ການລໍ້ລວງ.

ພາດຂອງທຳມະຊາດຂອງມະນຸດ ຊຶ່ງຂ້າ
ພະເຈົ້າເສຍໃຈທີ່ຈະເວົ້າວ່າ ສິ່ງເຫລົ່າ
ນີ້ໄດ້ຊັກນຳຂ້າພະເຈົ້າໄປສູ່ການລໍ້ລວງ
ຕ່າງໆ ຊຶ່ງເປັນສິ່ງທີ່ຂຸ່ນເຄືອງໃນສາຍພຣະ
ເນດຂອງພຣະເຈົ້າ. ໃນການສາລະພາບ
ນີ້ ໂປດຢ່າຄິດວ່າ ຂ້າພະເຈົ້າໄດ້ເຮັດບາບ
ຢ່າງຮ້າຍແຮງ. ຂ້າພະເຈົ້າບໍ່ແມ່ນຄົນທີ່ມີນິ
ໄສແບບນັ້ນເລີຍ. ແຕ່ຂ້າພະເຈົ້າມີຄວາມ
ຜິດເລື່ອງຕະຫລົກ, ແລະ ບາງເທື່ອໄດ້ເຂົ້າ
ຮ່ວມກັບກຸ່ມມັກສະໜຸກ, ແລະ ອື່ນໆ, ບໍ່ຖືກ
ຕ້ອງກັບລັກສະນະນັ້ນຊຶ່ງຄວນມີຢູ່ໃນຄົນ
ທີ່ໄດ້ຖືກ [ຂ]ເອີ້ນຈາກພຣະເຈົ້າດັ່ງທີ່ຂ້າພະ
ເຈົ້າໄດ້ຮັບ. ແຕ່ສິ່ງນີ້ເບິ່ງແລ້ວຈະບໍ່ແປກ
ຫຍັງຫລາຍກັບຜູ້ໃດທີ່ຈື່ຈຳຕອນຂ້າພະ
ເຈົ້າເປັນໜຸ່ມ, ແລະ ຄຸ້ນເຄີຍກັບນິໄສໃຈຄໍ
ທີ່ຊື່ນບານຊຶ່ງເປັນທຳມະຊາດຂອງຂ້າພະ
ເຈົ້າ.

29 ເນື່ອງດ້ວຍເຫດເຫລົ່ານີ້, ຂ້າພະເຈົ້າ
ມັກຈະຮູ້ສຶກຜິດເນື່ອງຈາກຄວາມອ່ອນ
ແອ ແລະ ຄວາມບົກພ່ອງຂອງຂ້າພະເຈົ້າ;
ໃນຄືນທີ່ກ່າວມານັ້ນ ຂອງວັນທີຊາວເອັດ
ເດືອນກັນຍາ, ຫລັງຈາກຂ້າພະເຈົ້າໄດ້
ເຂົ້ານອນແລ້ວ, ຂ້າພະເຈົ້າໄດ້ນ້ອມຕົວລົງ
[ກ]ອະທິຖານ ແລະ ອ້ອນວອນຕໍ່ພຣະເຈົ້າຜູ້
ຊົງລິດອຳນາດຍິ່ງໃຫຍ່ ເພື່ອຂໍການອະໄພ
ໂທດໃຫ້ແກ່ຄວາມຜິດບາບ ແລະ ຄວາມ
ຜິດພາດທັງປວງຂອງຂ້າພະເຈົ້າ, ແລະ
ທັງຂໍໃຫ້ຂ້າພະເຈົ້າເຫັນການສະແດງໃຫ້
ປະຈັກ ຊຶ່ງຈະເຮັດໃຫ້ຂ້າພະເຈົ້າຮູ້ເຖິງ
ສະພາບ ແລະ ຖານະຂອງຂ້າພະເຈົ້າທີ່ມີຕໍ່
ພຣະອົງ; ເພາະວ່າຂ້າພະເຈົ້າມີຄວາມເຊື່ອ
ໝັ້ນເຕັມທີ່ວ່າ ຈະໄດ້ເຫັນການສະແດງ
ໃຫ້ປະຈັກຈາກສະຫວັນທີ່ເຄີຍໄດ້ເຫັນມາ
ກ່ອນແລ້ວ.

30 ໃນຂະນະທີ່ຂ້າພະເຈົ້າກຳລັງເອີ້ນຫາ
ພຣະເຈົ້າຢູ່ນັ້ນ, ຂ້າພະເຈົ້າໄດ້ເຫັນແສງ
ສະຫວ່າງປະກົດຂຶ້ນໃນຫ້ອງຂອງຂ້າພະ
ເຈົ້າ, ຊຶ່ງແສງນັ້ນສະຫວ່າງຂຶ້ນເລື້ອຍໆ ຈົນ
ວ່າຫ້ອງຂອງຂ້າພະເຈົ້າແຈ້ງສະຫວ່າງຍິ່ງ
ກວ່າຕອນທ່ຽງວັນ. ໃນທັນໃດນັ້ນ [ກ]ຄົນຜູ້
ໜຶ່ງກໍປະກົດຂຶ້ນຢູ່ຂ້າງຕຽງນອນຂອງຂ້າ
ພະເຈົ້າ, ຢືນຢູ່ໃນອາກາດ, ເພາະຕີນຂອງ
ເພິ່ນບໍ່ໄດ້ແຕະຕ້ອງພື້ນຫ້ອງເລີຍ.

31 ເພິ່ນໃສ່ເສື້ອຄຸມສີຂາວຂະໜາດ. ມັນ
[ກ]ຂາວຍິ່ງກວ່າສິ່ງໃດໆໃນໂລກທີ່ຂ້າພະ
ເຈົ້າເຄີຍເຫັນມາ; ຂ້າພະເຈົ້າເຊື່ອວ່າຈະບໍ່
ມີສິ່ງໃດໃນໂລກ ທີ່ຈະເຮັດໃຫ້ປະກົດຂາວ
ແລະ ສະຫວ່າງໄດ້ຢ່າງຍິ່ງເຊັ່ນນັ້ນ. ມືຂອງ
ເພິ່ນເປືອຍເປົ່າ, ແລະ ແຂນຂອງເພິ່ນສ່ວນ
ທີ່ເທິງຂໍ້ມືໜ້ອຍໜຶ່ງກໍເປືອຍເປົ່າເໝືອນ
ກັນ; ຕີນຂອງເພິ່ນເປືອຍເປົ່າ, ແລະ ຂາ
ສ່ວນທີ່ເທິງໜ້ອຍໜຶ່ງກໍເປືອຍເປົ່າເໝືອນ
ກັນ. ຫົວ ແລະ ຄໍຂອງເພິ່ນກໍເປືອຍເປົ່າ
ເໝືອນກັນ. ຂ້າພະເຈົ້າເຫັນໄດ້ວ່າ ເພິ່ນ
ບໍ່ໄດ້ນຸ່ງອັນໃດອີກນອກຈາກເສື້ອຄຸມຕົວ
ນັ້ນ ເພາະມັນເປີດຈົນຂ້າພະເຈົ້າສາມາດ
ຫລຽວເຫັນໜ້າເອິກຂອງເພິ່ນ.

32 ບໍ່ພຽງແຕ່ເສື້ອຄຸມຂອງເພິ່ນຂາວຢ່າງ
ຍິ່ງເທົ່ານັ້ນ, ແຕ່ທົ່ວທັງຮ່າງກາຍຂອງເພິ່ນ
ນັ້ນມີ [ກ]ແສງຮຸ່ງເຫລື້ອມເກີນກວ່າທີ່ຈະ
ພັນລະນາໄດ້, ແລະ ໜ້າຂອງເພິ່ນຄືກັນ
ກັບ [ຂ]ຟ້າແມບເຫລື້ອມແທ້ໆ. ຫ້ອງນັ້ນສະ

28 *ຂ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
29 *ກ* ຄມພ ອະທິຖານ, ການອະທິຖານ, ຄຳອະທິຖານ.
30 *ກ* ຄມພ ທູດ, ເທວະດາ; ໂມໂຣໄນ, ລູກຊາຍຂອງມໍມອນ.
31 *ກ* ກຈກ 10:30; 1 ນຟ 8:5; 3 ນຟ 11:8.
32 *ກ* 3 ນຟ 19:25. ຄມພ ລັດສະໝີພາບ.
*ຂ* ອພຍ 34:29–35; ຮລມ 5:36; ຄພ 110:3.

ຫລ່າງຢ່າງຍິ່ງ, ແຕ່ວ່າຍັງບໍ່ເທົ່າກັບຄວາມ
ສະຫວ່າງທີ່ຢູ່ອ້ອມຕົວຂອງເພິ່ນ. ເມື່ອຂ້າ
ພະເຈົ້າຫລຽວເຫັນເພິ່ນ, ທຳອິດຂ້າພະເຈົ້າ
ກໍ [ຄ]ຢ້ານ; ແຕ່ບໍ່ດົນຄວາມຢ້ານນັ້ນກໍຫາຍ
ໄປ.
33 ເພິ່ນ ໄດ້ ເອີ້ນ [ກ]ຊື່ ຂ້າ ພະ ເຈົ້າ ແລະ
ໄດ້ ເວົ້າກັບ ຂ້າພະ ເຈົ້າວ່າ ເພິ່ນ ແມ່ນທູດ
ສະຫວັນທີ່ຖືກສົ່ງ ມາຈາກທີ່ປະທັບຂອງ
ພຣະເຈົ້າ ໃຫ້ມາຫາຂ້າພະເຈົ້າ, ແລະ ວ່າ
ເພິ່ນຊື່ ໂມໂຣໄນ; ວ່າພຣະເຈົ້າມີວຽກງານ
ໃຫ້ຂ້າພະເຈົ້າເຮັດ; ແລະ ບອກວ່າຊື່ຂອງ
ຂ້າພະເຈົ້າຈະມີຢູ່ທັງທາງດີ ແລະ ທາງ
ຊົ່ວ ໃນບັນດາທຸກປະຊາຊາດ, ທຸກຕະກຸນ,
ແລະ ທຸກພາສາ, ຫລື ວ່າຊື່ຂອງຂ້າພະເຈົ້າ
ຈະຖືກເວົ້າເຖິງໃນທາງດີ ແລະ ທາງຊົ່ວຢູ່
ໃນບັນດາຜູ້ຄົນທັງປວງ.
34 ເພິ່ນໄດ້ບອກວ່າ ມັນມີ [ກ]ໜັງສືເຫລັ້ມ
ໜຶ່ງຝັງຢູ່, ທີ່ຖືກຂຽນໄວ້ໃນ [ຂ]ແຜ່ນຈາລຶກ
ຄຳ, ຊຶ່ງໃຫ້ເລື່ອງລາວຂອງຜູ້ເຄີຍອາໄສຢູ່
ໃນທະວີບນີ້ໃນສະໄໝກ່ອນ ແລະ ເລື່ອງ
ຖິ່ນກຳເນີດຂອງຄົນເຫລົ່ານັ້ນ. ເພິ່ນໄດ້
ບອກອີກວ່າ [ຄ]ຄວາມສົມບູນຂອງພຣະກິດ
ຕິຄຸນອັນເປັນນິດ ມີຢູ່ໃນໜັງສືນັ້ນ ຕາມທີ່
ພຣະຜູ້ຊ່ວຍໃຫ້ລອດໄດ້ປະທານໃຫ້ຜູ້ອາ
ໄສຢູ່ໃນສະໄໝບູຮານ;
35 ຍັງມີຫີນສອງກ້ອນຕິດຢູ່ກັບຄັນທະນູ
ທີ່ເຮັດດ້ວຍເງິນອີກ—ແລະ ຫີນສອງກ້ອນ
ນີ້, ຊຶ່ງຕິດຢູ່ກັບ [ກ]ແຜ່ນປົກເອິກ, ປະກອບ
ເປັນສິ່ງທີ່ເອີ້ນວ່າ [ຂ]ອຸລີມ ແລະ ທຸມມີມ—
ໄດ້ຖືກຝັງໄວ້ຢູ່ກັບແຜ່ນຈາລຶກ; ການເປັນ
ເຈົ້າຂອງ ແລະ ການໃຊ້ຫີນສອງກ້ອນນີ້
ເປັນສ່ວນປະກອບຂອງການເປັນ “ [ຄ]ຜູ້ພະ
ຍາກອນ” ໃນສະໄໝບູຮານ ຫລື ສະໄໝ
ກ່ອນ; ແລະ ວ່າພຣະເຈົ້າໄດ້ຕຽມຫີນສອງ
ກ້ອນນີ້ໄວ້ ເພື່ອຈຸດປະສົງໃນການແປໜັງ
ສືເຫລັ້ມນີ້.
36 ຫລັງຈາກເພິ່ນໄດ້ເລົ່າເລື່ອງເຫລົ່ານີ້
ໃຫ້ຂ້າພະເຈົ້າຟັງແລ້ວ, ເພິ່ນກໍໄດ້ເລີ່ມອ້າງ
ເຖິງຄຳທຳນາຍຈາກ [ກ]ພຣະຄຳພີເດີມ. ທຳ
ອິດເພິ່ນໄດ້ອ້າງເຖິງຕອນໜຶ່ງໃນ [ຂ]ບົດທີ
ສາມຂອງມາລາກີ; ແລະ ເພິ່ນໄດ້ອ້າງເຖິງ
ບົດທີສີ່ ຫລື ບົດສຸດທ້າຍຂອງຄຳທຳນາຍ
ດຽວກັນນັ້ນນຳອີກ, ແຕ່ມັນຜິດພ້ຽນໄປ
ຈາກທີ່ມີຢູ່ໃນພຣະຄຣິສຕະທຳຄຳພີຂອງ
ພວກເຮົາໜ້ອຍໜຶ່ງ. ແທນທີ່ຈະກ່າວຂໍ້ທຳ
ອິດຕາມທີ່ມີຢູ່ໃນພຣະຄຳພີເດີມ, ເພິ່ນໄດ້
ອ້າງເຖິງຂໍ້ນັ້ນໄວ້ດັ່ງນີ້:
37 *ເພາະຈົ່ງເບິ່ງ, [ກ]ວັນຈະມາເຖິງ ຊຶ່ງຈະ*
*[ຂ]ເຜົາໄໝ້ເໝືອນເຕົາອົບ ແລະ ຄົນທີ່ອວດ*
*ດີທັງໝົດ, ແທ້ຈິງແລ້ວ, ແລະ ຄົນທີ່ເຮັດ*
*ຄວາມຊົ່ວຮ້າຍທັງໝົດ ຈະໄໝ້ຄືກັບກັບ*
*[ຄ]ເຟືອງເຂົ້າ. ຈອມໂຍທາໄດ້ກ່າວໄວ້ວ່າ*
*ມັນຈະໄໝ້ພວກນັ້ນທັງໝົດເໝືອນໃໝ້ຕົ້ນ*
*ໄມ້. ມັນຈະບໍ່ເຫລືອແມ່ນແຕ່ຮາກ ຫລື ກິ່ງ*
*ກ້ານໄວ້ເລີຍ.*
38 ແລະ ເພິ່ນ ໄດ້ ອ້າງ ເຖິງຂໍ້ ທີ ຫ້າ ອີກ

32 *ຄ* ອພຍ 3:6;
ອຫ 3:6–8, 19.
33 *ກ* ອພຍ 33:12, 17;
ອຊຢ 45:3–4.
34 *ກ* ຄມພ ພຣະຄຳພີມໍມອນ.
*ຂ* ຄມພ ແຜ່ນຈາລຶກຄຳ.
*ຄ* ຄມພ ການຟື້ນຟູ
ພຣະກິດຕິຄຸນ.
35 *ກ* ລລວ 8:8.
ຄມພ ແຜ່ນປົກເອິກ.
*ຂ* ອພຍ 28:30.
ຄມພ ອຸລີມ ແລະ ທຸມມີມ.
*ຄ* ຄມພ ຜູ້ພະຍາກອນ.
36 *ກ* ຄມພ ພຣະຄຳພີເດີມ.
*ຂ* ຄມພ ມາລາກີ.
37 *ກ* ຄມພ ການສະເດັດມາຄັ້ງທີ
ສອງຂອງພຣະເຢຊູຄຣິດ.
*ຂ* 3 ນຟ 25;
ຄພ 64:23–24.
ຄມພ ແຜ່ນດິນໂລກ—ການ
ຊຳລະລ້າງແຜ່ນດິນໂລກ;
ໂລກ—ທີ່ສຸດຂອງໂລກ.
*ຄ* ນຮ 1:8–10;
1 ນຟ 22:15, 23;
2 ນຟ 26:4–6;
ຄພ 29:9.

ດັ່ງນີ້: *ຈົ່ງເບິ່ງ, ເຮົາຈະເປີດເຜີຍ [ກ]ຖານະ
ປະໂລຫິດແກ່ເຈົ້າໂດຍມືຂອງສາດສະດາ
[ຂ]ເອລີຢາ ກ່ອນມື້ອັນຍິ່ງໃຫຍ່ ແລະ ໜ້າ
ຢ້ານກົວຂອງພຣະຜູ້ເປັນເຈົ້າຈະມາເຖິງ.*
39 ເພິ່ນໄດ້ອ້າງເຖິງຂໍ້ຕໍ່ໄປຕື່ມອີກໂດຍ
ຜິດພ້ຽນໄປແດ່ໜ້ອຍໜຶ່ງວ່າ: *ແລະ ເພິ່ນ
ຈະເອົາ [ກ]ຄຳສັນຍາທີ່ເຮັດໄວ້ກັບບັນພະບຸ
ລຸດໃສ່ໄວ້ໃນຈິດໃຈຂອງລູກຫລານ ແລ້ວ
ຫົວໃຈຂອງລູກຫລານຈະ [ຂ]ຫັນໄປຫາບັນ
ພະບຸລຸດຂອງຕົນ. ຖ້າບໍ່ດັ່ງນັ້ນທັງໂລກກໍ
ຈະຖືກທຳລາຍໃຫ້ໝົດສິ້ນ ເວລາພຣະອົງ
ສະເດັດມາ.*
40 ນອກເໜືອໄປຈາກຂໍ້ນີ້ແລ້ວ, ເພິ່ນຍັງ
ໄດ້ອ້າງເຖິງເອຊາຢາ ບົດທີສິບເອັດນຳອີກ,
ໂດຍກ່າວວ່າ ມັນກຳລັງຈະເກີດເປັນຈິງ
ແລ້ວ. ເພິ່ນໄດ້ອ້າງເຖິງກິດຈະການ ບົດທີ
ສາມ ຂໍ້ທີຊາວສອງ ແລະ ຂໍ້ທີຊາວສາມນຳ
ອີກ ຊຶ່ງຄືກັນກັບທີ່ມີຢູ່ໃນພຣະຄຳພີໃໝ່.
ເພິ່ນໄດ້ເວົ້າວ່າ [ກ]ສາດສະດານັ້ນຄື ພຣະ
ຄຣິດ; ແຕ່ວັນ "ຜູ້ທີ່ບໍ່ຍອມຟັງສຸລະສຽງ
ຂອງພຣະອົງຈະຖືກ [ຂ]ຕັດອອກຈາກບັນດາ
ຜູ້ຄົນ," ນັ້ນ ຍັງບໍ່ທັນເກີດຂຶ້ນເທື່ອ, ແຕ່ມັນ
ຈະເກີດຂຶ້ນໃນບໍ່ຊ້ານີ້.
41 ເພິ່ນໄດ້ອ້າງເຖິງ [ກ]ໂຢເອນ ບົດທີ
ສອງນຳອີກ, ຕັ້ງແຕ່ຂໍ້ທີຊາວແປດ ເຖິງຂໍ້
ສຸດທ້າຍ. ເພິ່ນໄດ້ກ່າວອີກວ່າ ເລື່ອງນີ້ຍັງ
ບໍ່ເກີດຂຶ້ນເທື່ອ, ແຕ່ຈະເກີດຂຶ້ນໃນບໍ່ຊ້ານີ້.
ແລະ ເພິ່ນໄດ້ກ່າວຕໍ່ໄປອີກວ່າ ບໍ່ດົນ [ຂ]ຄົນ
ຕ່າງຊາດກໍຈະໄດ້ຮັບພຣະກິດຕິຄຸນ. ເພິ່ນ
ໄດ້ອ້າງເຖິງຂໍ້ຄວາມອື່ນໆຈາກພຣະຄຳພີ
ຫລາຍຂໍ້ ແລະ ໃຫ້ຄຳອະທິບາຍໄວ້ຢ່າງ
ຫລວງຫລາຍ ຊຶ່ງບໍ່ອາດສາມາດກ່າວໄວ້
ໃນນີ້.
42 ເພິ່ນໄດ້ບອກຂ້າພະເຈົ້າອີກວ່າ ເມື່ອ
ຂ້າພະເຈົ້າໄດ້ແຜ່ນຈາລຶກເຫລົ່ານັ້ນທີ່ເພິ່ນ
ກ່າວເຖິງ—ເພາະເວລາທີ່ຈະໄດ້ຮັບຍັງບໍ່
ທັນມາເຖິງເທື່ອ—ຂ້າພະເຈົ້າບໍ່ຄວນເອົາ
ໃຫ້ຄົນໃດເບິ່ງ; ທັງແຜ່ນປົກເອິກກັບອຸລີມ
ແລະ ທຸມມີມ ນັ້ນຄືກັນ; ນອກຈາກກັບຄົນ
ທີ່ຂ້າພະເຈົ້າຈະໄດ້ຮັບບັນຊາໃຫ້ເຮັດເທົ່າ
ນັ້ນ; ຖ້າຫາກວ່າຂ້າພະເຈົ້າຂືນເຮັດ ຂ້າພະ
ເຈົ້າກໍຈະຖືກທຳລາຍ. ຂະນະທີ່ເພິ່ນເວົ້າ
ກັບຂ້າພະເຈົ້າກ່ຽວກັບແຜ່ນຈາລຶກຢູ່ນັ້ນ,
ພາບກໍບັງເກີດຂຶ້ນໃນ [ກ]ຄວາມນຶກຄິດຂອງ
ຂ້າພະເຈົ້າ ຈົນຫລຽວເຫັນສະຖານທີ່ ບ່ອນ
ແຜ່ນຈາລຶກຖືກຝັງໄວ້, ແລະ ເຫັນຢ່າງ
ແຈ່ມແຈ້ງ ແລະ ຊັດເຈນດີຈົນວ່າ ຂ້າພະ
ເຈົ້າຮູ້ຈັກບ່ອນນັ້ນທັນທີ ເມື່ອເວລາໄປ
ເຖິງ.
43 ຫລັງຈາກສົນທະນາກັນແລ້ວ, ຂ້າ
ພະເຈົ້າໄດ້ເຫັນແສງສະຫວ່າງໃນຫ້ອງເລີ່ມ
ລວມຕົວກັນເຂົ້າມາຮອບໆ ໃກ້ຕົວຂອງຜູ້
ທີ່ກ່າວກັບຂ້າພະເຈົ້າ, ແລະ ຄົງເປັນຢູ່ຕໍ່
ໄປແນວນັ້ນຈົນວ່າຫ້ອງມືດລົງອີກ, ນອກ
ຈາກທີ່ຢູ່ຮອບຕົວຂອງເພິ່ນ; ໃນທັນໃດນັ້ນ,
ຂ້າພະເຈົ້າໄດ້ເຫັນ, ຄືກັບວ່າ ເປັນທາງ
ຂຶ້ນໄປສູ່ສະຫວັນ, ແລະ ເພິ່ນໄດ້ກັບຂຶ້ນ
ໄປຈົນລັບສາຍຕາ, ແລະ ຫ້ອງກໍກັບຄືນສູ່
ສະພາບເດີມເໝືອນກ່ອນທີ່ແສງສະຫວ່າງ
ຈາກສະຫວັນມາປະກົດ.
44 ຂ້າພະເຈົ້າໄດ້ນອນຄິດເຖິງສິ່ງແປກ
ປະຫລາດຂອງເຫດການນີ້, ແລະ ປະ

38 *ກ* ຄມພ ຂໍກະແຈຂອງ ຖານະປະໂລຫິດ; ຖານະປະໂລຫິດ.
*ຂ* ຄພ 27:9; 110:13–16. ຄມພ ເອລີຢາ.
39 *ກ* ຄລຕ 3:8, 19.
*ຂ* ຄມພ ຄວາມລອດສຳລັບຄົນຕາຍ; ລຳດັບການສືບເຊື້ອສາຍ.
40 *ກ* ພບຍ 18:15–19.
*ຂ* 3 ນຟ 20:23; 21:20.
41 *ກ* ກຈກ 2:16–21.
*ຂ* ຣມ 11:11–25; ຄພ 88:84. ຄມພ ຄົນຕ່າງຊາດ.
42 *ກ* ຄມພ ຈິດໃຈ.

ຫລາດໃຈຫລາຍໃນເລື່ອງທີ່ທູດພິເສດຜູ້ນີ້ໄດ້ບອກກັບຂ້າພະເຈົ້າ; ຂະນະທີ່ກຳລັງ ᵍໃຊ້ຄວາມຄິດຢູ່, ທັນໃດນັ້ນຂ້າພະເຈົ້າໄດ້ເຫັນຫ້ອງຂອງຂ້າພະເຈົ້າເລີ່ມສະຫວ່າງຂຶ້ນອີກ, ແລະ ໃນທັນໃດນັ້ນ, ຄືກັບວ່າທູດສະຫວັນຜູ້ເກົ່າ ກໍໄດ້ມາຢືນຢູ່ຂ້າງຕຽງນອນຂອງຂ້າພະເຈົ້າອີກ.

45 ເພິ່ນໄດ້ເລີ່ມຕົ້ນ, ແລະ ເລົ່າເຖິງເລື່ອງດຽວກັນນັ້ນ ຊຶ່ງເພິ່ນໄດ້ເຮັດ ຕອນເພິ່ນມາຢ້ຽມຢາມເທື່ອກ່ອນ, ໂດຍບໍ່ຜິດພ້ຽນຈັກໜ້ອຍເລີຍ; ຊຶ່ງເມື່ອເລົ່າຈົບແລ້ວ, ເພິ່ນໄດ້ບອກຂ້າພະເຈົ້າເຖິງການພິພາກສາອັນຍິ່ງໃຫຍ່ ທີ່ກຳລັງຈະມາສູ່ໂລກນີ້, ພ້ອມດ້ວຍການເຮັດໃຫ້ເປົ່າປ່ຽວຢ່າງໃຫຍ່ຫລວງດ້ວຍຄວາມອຶດຢາກ, ດ້ວຍດາບ, ແລະ ດ້ວຍພະຍາດໂລຄາ; ແລະ ວ່າການພິພາກສາອັນໜ້າເສົ້າສະຫລົດໃຈຈະມາສູ່ໂລກກັບຄົນລຸ້ນນີ້. ເມື່ອເລົ່າເລື່ອງນີ້ແລ້ວ, ເພິ່ນກໍໄດ້ກັບຂຶ້ນໄປສະຫວັນອີກຄືກັນກັບເທື່ອກ່ອນ.

46 ໃນເວລານັ້ນ, ຄວາມຮູ້ສຶກທີ່ເກີດຂຶ້ນໃນຄວາມນຶກຄິດຂອງຂ້າພະເຈົ້ານັ້ນ ເລິກຊຶ້ງຫລາຍຈົນບໍ່ອາດຈະຫລັບໄດ້ ແລະ ນອນຢູ່ໃນຄວາມປະຫລາດໃຈຢ່າງຖ້ວມລົ້ນ ເຖິງສິ່ງທີ່ຂ້າພະເຈົ້າໄດ້ເຫັນ ແລະ ໄດ້ຍິນ. ແຕ່ຂ້າພະເຈົ້າປະຫລາດໃຈຫລາຍເມື່ອເຫັນທູດຜູ້ດຽວກັນນັ້ນ ມາຢືນຢູ່ຂ້າງຕຽງນອນຂອງຂ້າພະເຈົ້າອີກ, ແລະ ໄດ້ຍິນເພິ່ນກ່າວທວນຄືນ ຫລື ກ່າວຊ້ຳຄຳເກົ່າໃຫ້ຂ້າພະເຈົ້າຟັງອີກ ເຖິງເລື່ອງດຽວກັນກັບເທື່ອກ່ອນ; ແລະ ຍັງເຕືອນຂ້າພະເຈົ້າວ່າ ᵍຊາຕານຈະພະຍາຍາມ ᵏລໍ້ລວງຂ້າພະເຈົ້າ (ເນື່ອງຈາກສະພາບຄວາມຍາກຈົນຂອງຄອບຄົວຂອງພໍ່ຂອງຂ້າພະເຈົ້າ), ໃຫ້ເອົາແຜ່ນຈາລຶກໄປ ເພື່ອຈຸດປະສົງທີ່ຈະສ້າງຄວາມຮັ່ງມີ. ເລື່ອງນີ້ເພິ່ນຫ້າມຂ້າພະເຈົ້າໂດຍກ່າວວ່າ ຂ້າພະເຈົ້າຈະຕ້ອງບໍ່ມີຈຸດປະສົງຢ່າງອື່ນ ໃນການໄດ້ແຜ່ນຈາລຶກນັ້ນມາ ນອກຈາກເພື່ອຖວາຍບາລະມີແດ່ພຣະເຈົ້າເທົ່ານັ້ນ, ແລະ ຕ້ອງບໍ່ຕົກຢູ່ໃນອິດທິພົນຂອງ ᶜຄວາມມຸ້ງໝາຍອື່ນໃດນອກຈາກເພື່ອການສ້າງອານາຈັກຂອງພຣະອົງ; ຖ້າບໍ່ດັ່ງນັ້ນ ຂ້າພະເຈົ້າຈະເອົາແຜ່ນຈາລຶກມາບໍ່ໄດ້.

47 ຫລັງຈາກການມາຢ້ຽມຢາມເທື່ອທີສາມນີ້, ເພິ່ນກໍກັບຂຶ້ນສູ່ສະຫວັນຄືກັນກັບເທື່ອກ່ອນ, ແລະ ຂ້າພະເຈົ້າຄິດເຖິງຄວາມແປກປະຫລາດນຳສິ່ງທີ່ຂ້າພະເຈົ້າຫາກໍໄດ້ປະສົບມາ; ເກືອບໃນທັນທີ ຫລັງຈາກທູດສະຫວັນໄດ້ໄປຈາກຂ້າພະເຈົ້າເທື່ອທີສາມ, ໄກ່ກໍຂັນ ແລະ ຂ້າພະເຈົ້າຮູ້ວ່າ ມັນໃກ້ຈະເປັນມື້ໃໝ່ແລ້ວ. ດັ່ງນັ້ນ ການສົນທະນາຂອງພວກເຮົາແມ່ນໃຊ້ເວລາຕະຫລອດທັງຄືນເລີຍ.

48 ບໍ່ດົນຫລັງຈາກນັ້ນ ຂ້າພະເຈົ້າໄດ້ລຸກຂຶ້ນຈາກຕຽງນອນຂອງຂ້າພະເຈົ້າ, ແລະ ອອກໄປເຮັດວຽກຕາມປົກກະຕິ, ແຕ່ເມື່ອຂ້າພະເຈົ້າພະຍາຍາມເຮັດວຽກຄືກັນກັບມື້ອື່ນໆ, ຂ້າພະເຈົ້າພົບວ່າໝົດກຳລັງຈົນເຮັດຕໍ່ໄປບໍ່ໄຫວ. ພໍ່ຂອງຂ້າພະເຈົ້າທີ່ກຳລັງເຮັດວຽກຢູ່ກັບຂ້າພະເຈົ້າເຫັນວ່າ ມີອັນໃດອັນໜຶ່ງຜິດປົກກະຕິກັບຂ້າພະເຈົ້າ, ຈຶ່ງບອກໃຫ້ຂ້າພະເຈົ້າກັບບ້ານ. ຂ້າພະເຈົ້າອອກໄປດ້ວຍຄວາມຕັ້ງໃຈທີ່ຈະກັບບ້ານ; ແຕ່ເວລາທີ່ພະຍາຍາມຂ້າມຮົ້ວອອກຈາກໄຮ່ທີ່ພວກເຮົາຢູ່, ຂ້າພະເຈົ້າກໍໝົດແຮງ,

44 *ກ* ຄມພ ໄຕ່ຕອງ.
46 *ກ* ຄມພ ມານ.
*ຂ* ຄມພ ລໍ້ລວງ, ການລໍ້ລວງ.
*ຄ* ຄພ 121:37.

ແລະ ລົ້ມລົງແຜ່ຢູ່ກັບພື້ນດິນ, ແລະ ໝົດ
ສະຕິໄປຊົ່ວໄລຍະໜຶ່ງ.
49 ສິ່ງທຳອິດທີ່ຈື່ໄດ້ຄືສຽງທີ່ກ່າວກັບຂ້າ
ພະເຈົ້າ ແລະ ເອີ້ນຊື່ຂອງຂ້າພະເຈົ້າ. ຂ້າ
ພະເຈົ້າໄດ້ຫລຽວຂຶ້ນ, ແລະ ເຫັນທູດຜູ້ເກົ່າ
ນັ້ນຢືນຢູ່ຊື່ຫົວຂອງຂ້າພະເຈົ້າ, ມີແສງສະ
ຫວ່າງຢູ່ອ້ອມຮອບ ຄືກັນກັບເທື່ອກ່ອນ.
ແລ້ວເພິ່ນໄດ້ເວົ້າເລື່ອງທັງໝົດ ທີ່ໄດ້ເລົ່າ
ໃຫ້ຂ້າພະເຈົ້າຟັງ ເມື່ອມື້ຄືນນີ້ອີກ, ແລະ
ສັ່ງໃຫ້ຂ້າພະເຈົ້າກັບຄືນໄປຫາ [ກ]ພໍ່ຂອງຂ້າ
ພະເຈົ້າ ແລະ ບອກເພິ່ນກ່ຽວກັບພາບ ແລະ
ຄຳສັ່ງທີ່ຂ້າພະເຈົ້າໄດ້ຮັບ.
50 ຂ້າພະເຈົ້າໄດ້ເຮັດຕາມ; ຂ້າພະເຈົ້າ
ໄດ້ກັບໄປຫາພໍ່ໃນໄຮ່, ແລະ ເລົ່າເລື່ອງ
ທັງໝົດໃຫ້ເພິ່ນຟັງ. ເພິ່ນຕອບຂ້າພະເຈົ້າ
ວ່າ ມັນເປັນເລື່ອງຂອງພຣະເຈົ້າ, ແລະ
ບອກໃຫ້ຂ້າພະເຈົ້າໄປເຮັດຕາມສິ່ງທີ່ທູດ
ສັ່ງ. ຂ້າພະເຈົ້າຈຶ່ງອອກຈາກໄຮ່, ແລະ ໄປ
ຫາບ່ອນທີ່ທູດບອກຂ້າພະເຈົ້າວ່າມີແຜ່ນ
ຈາລຶກຝັງຢູ່; ແລະ ເພາະເນື່ອງຈາກຄວາມ
ແຈ່ມແຈ້ງຂອງພາບທີ່ຂ້າພະເຈົ້າໄດ້ຮັບ
ກ່ຽວກັບບ່ອນນັ້ນ, ຂ້າພະເຈົ້າຈຶ່ງຮູ້ຈັກບ່ອນ
ນັ້ນທັນທີ ເມື່ອຂ້າພະເຈົ້າໄປເຖິງ.
51 ໃກ້ໝູ່ບ້ານ ແມນເຈດສະເຕີ, ເຂດ
ອອນແທຣິໂອ, ລັດນິວຢອກ, ມີ [ກ]ພູຂະ
ໜາດໃຫຍ່ໜ່ອຍໜຶ່ງ ແລະ ສູງກວ່າພູ
ໜ່ອຍອື່ນໆທີ່ຢູ່ໃກ້ຄຽງ. ທາງດ້ານຕາ
ເວັນຕົກຂອງພູໜ່ອຍນີ້, ບໍ່ໄກຈາກຈອມພູ
ຫລາຍປານໃດ, ຢູ່ກ້ອງກ້ອນຫີນຂະໜາດ
ໃຫຍ່ກ້ອນໜຶ່ງ, ມີແຜ່ນຈາລຶກວາງຢູ່, ໃນ
ຫີບທີ່ເປັນຫີນ. ຫີນກ້ອນນີ້ໜາ ແລະ ທາງ
ກາງຂອງຫີນນີ້ໂຄ້ງ ແລະ ລາດລົງໄປຫາ
ຂອບ, ຈົນຫລຽວເຫັນທາງກາງຂອງມັນໄດ້
ຈາກໜ້າດິນ, ແຕ່ດິນປົດຮອບຂອບໄວ້ທັງ
ໝົດ.
52 ເມື່ອຂຸດດິນອອກແລ້ວ, ຂ້າພະເຈົ້າ
ໄດ້ຫາໄມ້ລຳໜຶ່ງ, ຊຶ່ງຂ້າພະເຈົ້າໄດ້ສອດ
ມັນລົງກ້ອງຂອບຫີນ, ແລະ ດ້ວຍການ
ອອກແຮງພຽງເລັກໜ້ອຍ ກໍງັດມັນຂຶ້ນ
ໄດ້. ຂ້າພະເຈົ້າຫລຽວເຂົ້າໄປໃນບ່ອນນັ້ນ,
ແລ້ວຂ້າພະເຈົ້າກໍໄດ້ເຫັນ [ກ]ແຜ່ນຈາລຶກ,
[ຂ]ອຸລີມ ແລະ ທຸມມີມ, ແລະ [ຄ]ແຜ່ນປົກເອິກ,
ຕາມທີ່ທູດບອກໄວ້. ຫີບທີ່ມີຂອງເຫລົ່ານີ້
ເຮັດຂຶ້ນໂດຍການວາງຫີນລຽນໄວ້ໃນຊີ
ມັງຊະນິດໜຶ່ງ. ຢູ່ກົ້ນຫີບມີຫີນຢູ່ສອງກ້ອນ
ວາງຢູ່ທາງຂວາງຂອງຫີບ, ແລະ ແຜ່ນ
ຈາລຶກກັບສິ່ງຂອງອື່ນໆຊຶ່ງຢູ່ນຳກັນ ວາງຢູ່
ເທິງຫີນສອງກ້ອນນີ້.
53 ຂ້າພະເຈົ້າພະຍາຍາມເອົາມັນອອກ
ມາ, ແຕ່ທູດໄດ້ຫ້າມໄວ້, ແລະ ບອກອີກ
ວ່າ ຍັງບໍ່ທັນເຖິງເວລາທີ່ຈະນຳມັນອອກ
ມາ, ຈົນກວ່າເວລາອີກສີ່ປີນັບແຕ່ເວລາ
ນັ້ນເປັນຕົ້ນໄປ; ແຕ່ເພິ່ນບອກຂ້າພະເຈົ້າ
ອີກວ່າ ຂ້າພະເຈົ້າຈະຕ້ອງມາບ່ອນນັ້ນ
ເມື່ອເຖິງວັນຄົບຮອບແຕ່ລະປີ, ແລະ ວ່າ
ເພິ່ນຈະມາພົບກັບຂ້າພະເຈົ້າຢູ່ບ່ອນນັ້ນ,
ແລະ ວ່າຂ້າພະເຈົ້າຈະຕ້ອງເຮັດແນວນັ້ນ
ໄປຈົນກວ່າຈະເຖິງເວລາທີ່ຈະໄດ້ຮັບແຜ່ນ
ຈາລຶກ.
54 ຕາມນັ້ນ, ຂ້າພະເຈົ້າຈຶ່ງໄປເມື່ອຄົບ
ກຳນົດທຸກປີຕາມທີ່ໄດ້ຮັບຄຳສັ່ງ, ແລະ
ແຕ່ລະເທື່ອຂ້າພະເຈົ້າໄດ້ພົບທູດອົງເກົ່າ
ຢູ່ບ່ອນນັ້ນ, ແລະ ໄດ້ຮັບຄຳແນະນຳ ແລະ
ຄວາມຮູ້ແຈ້ງຈາກເພິ່ນທຸກໆເທື່ອ, ສົນທະ
ນາກັນກ່ຽວກັບສິ່ງທີ່ພຣະຜູ້ເປັນເຈົ້າຈະກະ
ທຳ, ແລະ ກ່ຽວກັບ [ກ]ອານາຈັກຂອງພຣະ

49 *ກ* ຄມພ ສະມິດ, ໂຈເຊັບ, ຜູ້ພໍ່.
51 *ກ* ຄມພ ຄູໂມຣາ, ພູ.
52 *ກ* ມມ 6:6.
ຄມພ ແຜ່ນຈາລຶກຄຳ.
*ຂ* ຄມພ ອຸລີມ ແລະ ທຸມມີມ.
*ຄ* ຄມພ ແຜ່ນປົກເອິກ.
54 *ກ* ຄມພ ອານາຈັກຂອງ
ພຣະເຈົ້າ ຫລື ອາ
ນາຈັກສະຫວັນ.

ອົງຈະດຳເນີນໄປແນວໃດ ແລະ ໂດຍວິທີໃດໃນຍຸກສຸດທ້າຍ.

*ໂຈເຊັບ ສະມິດ ແຕ່ງງານກັບນາງເອມມາ ເຮວ—ເພິ່ນໄດ້ຮັບແຜ່ນຈາລຶກຄຳຈາກໂມໂຣໄນ ແລະ ແປອັກຂະລະບາງສ່ວນ—ມາຕິນ ແຮຣິສ ສະແດງອັກຂະລະ ແລະ ການແປຕໍ່ອາຈານແອນທັນ, ຜູ້ກ່າວວ່າ, "ຂ້າພະເຈົ້າບໍ່ສາມາດອ່ານໜັງສືທີ່ຜະນຶກໄວ້." (ຂໍ້ທີ 55–65.)*

55 ເນື່ອງ ຈາກວ່າ ຖານະຄວາມເປັນຢູ່ຂອງພໍ່ຂອງຂ້າພະເຈົ້າຍາກຈົນທີ່ສຸດ, ພວກເຮົາຈຶ່ງຕ້ອງເຮັດວຽກງານດ້ວຍແຮງມື, ຮັບຈ້າງງານລາຍວັນ, ແລະ ເຮັດວຽກງານອື່ນໆເທົ່າທີ່ພວກເຮົາຈະມີໂອກາດ. ບາງເທື່ອພວກເຮົາໄດ້ຢູ່ກັບຄອບຄົວ, ແລະ ບາງເທື່ອກໍໄດ້ຈາກຄອບຄົວໄປເຮັດວຽກງານຢູ່ໄກ, ແລະ ໂດຍການເຮັດວຽກງານຕະຫລອດເວລາ ພວກເຮົາຈຶ່ງມີພໍຢູ່ພໍກິນແດ່ໜ້ອຍໜຶ່ງ.

56 ໃນປີ 1823 ຄອບຄົວຂອງພໍ່ຂອງຂ້າພະເຈົ້າໄດ້ປະເຊີນກັບຄວາມທຸກອັນໃຫຍ່ຫລວງເພາະການຕາຍ ຂອງອ້າຍກົກຂອງຂ້າພະເຈົ້າ, [ກ]ອາລ໌ວິນ. ໃນເດືອນຕຸລາ, ປີ 1825, ຂ້າພະເຈົ້າໄດ້ໄປຮັບຈ້າງນຳສຸພາບບຸລຸດແກ່ຊະລາຄົນໜຶ່ງຊື່ວ່າ ໂຈໄຊຢາ ສະໂຕລ໌, ຜູ້ອາໄສຢູ່ໃນເຂດເຊີນັງໂກ, ລັດນິວຢອກ. ເພິ່ນໄດ້ຍິນເລື່ອງລາວກ່ຽວກັບຊາວສະເປນເປີດເໝືອງເງິນຢູ່ເມືອງຮາມໂມນີ, ເຂດຊັສຄູຮັນນາ, ລັດເພັນໂຊເວເນຍ; ແລະ ກ່ອນເພິ່ນຈະຈ້າງຂ້າພະເຈົ້າ, ເພິ່ນໄດ້ຂຸດຊອກຫາ, ຖ້າເປັນໄປໄດ້, ເພື່ອຈະພົບເໝືອງ. ຂ້າພະເຈົ້າໄດ້ໄປຢູ່ກັບເພິ່ນ, ແລ້ວເພິ່ນໄດ້ພາຂ້າພະເຈົ້າພ້ອມດ້ວຍຄົນງານທັງໝົດຂອງເພິ່ນໄປຂຸດເໝືອງເງິນ, ຊຶ່ງຢູ່ບ່ອນນັ້ນ ຂ້າພະເຈົ້າໄດ້ເຮັດວຽກງານຕໍ່ໄປເກືອບເຖິງໜຶ່ງເດືອນ, ໂດຍບໍ່ປະສົບຄວາມສຳເລັດໃນການທຳງານຂອງພວກເຮົາ; ແລະ ໃນທີ່ສຸດຂ້າພະເຈົ້າໄດ້ເກັຍກ່ອມສຸພາບບຸລຸດແກ່ຊະລາຄົນນັ້ນໃຫ້ເຊົາການຂຸດຫາເໝືອງນັ້ນ. ດ້ວຍເຫດນີ້ຈຶ່ງມີເລື່ອງລາວແຜ່ຂະຫຍາຍອອກໄປກ່ຽວກັບການເປັນນັກຂຸດເງິນຂອງຂ້າພະເຈົ້າ.

57 ລະຫວ່າງທີ່ຂ້າພະເຈົ້າໄດ້ຮັບຈ້າງຢູ່ນັ້ນ, ຂ້າພະເຈົ້າໄດ້ພັກຢູ່ກັບທ່ານໄອຊິກເຮວ ຢູ່ທີ່ນັ້ນ; ແມ່ນຢູ່ທີ່ນັ້ນແຫລະທີ່ຂ້າພະເຈົ້າໄດ້ພົບພັນລະຍາຂອງຂ້າພະເຈົ້າເທື່ອທຳອິດ (ລູກສາວຂອງເພິ່ນ), [ກ]ເອມມາເຮວ. ໃນວັນທີ 18 ເດືອນມັງກອນ, 1827, ພວກເຮົາໄດ້ແຕ່ງງານກັນ, ໃນຂະນະທີ່ຂ້າພະເຈົ້າຍັງທຳງານຢູ່ນຳທ່ານສະໂຕລ໌.

58 ເນື່ອງຈາກວ່າຂ້າພະເຈົ້າຍັງຢືນຢັນຕໍ່ໄປວ່າຂ້າພະເຈົ້າໄດ້ເຫັນພາບທີ່ມາໃຫ້ເຫັນ, [ກ]ການຂົ່ມເຫັງຈຶ່ງຍັງຕິດຕາມຂ້າພະເຈົ້າມາ, ແລະ ຄອບຄົວຂອງພໍ່ຂອງພັນລະຍາຂອງຂ້າພະເຈົ້າບໍ່ໄດ້ເຫັນພ້ອມກັບການແຕ່ງງານຂອງພວກເຮົາ. ສະນັ້ນ, ຂ້າພະເຈົ້າຈຶ່ງຈຳເປັນຕ້ອງພານາງໄປບ່ອນອື່ນ; ດັ່ງນັ້ນພວກເຮົາຈຶ່ງໄດ້ຈາກໄປ ແລະ ໄດ້ແຕ່ງງານກັນທີ່ບ້ານຂອງທ່ານສະແກວທາບຽວ, ໃນຊ້າວເບນບຣິຈ໌; ເຂດເຊີນັງໂກ, ລັດນິວຢອກ. ທັນທີຫລັງຈາກການແຕ່ງງານຂອງຂ້າພະເຈົ້າ, ພວກເຮົາກໍໄດ້ຈາກບ້ານຂອງທ່ານສະໂຕລ໌, ແລະ ໄປຍັງບ້ານຂອງພໍ່ຂອງຂ້າພະເຈົ້າ, ແລະ ເຮັດໄຮ່ກັບເພິ່ນໃນລະດູນັ້ນ.

59 ໃນ ທີ່ສຸດກໍເຖິງເວລາທີ່ຈະໄດ້ຮັບ

56 *ກ* ຄພ 137:5–8.
57 *ກ* ຄນພ ສະມິດ, ເອມມາ ເຮວ.
58 *ກ* ຄນພ ຂົ່ມເຫັງ, ການຂົ່ມເຫັງ.

ແຜ່ນຈາລຶກ, ອຸລິມ ແລະ ທຸມມິມ, ແລະ
ແຜ່ນປົກເອິກ. ໃນວັນທີຊາວສອງ, ເດືອນ
ກັນຍາ, ໜຶ່ງພັນແປດຮ້ອຍຊາວເຈັດ, ໂດຍ
ທີ່ໄດ້ໄປຫາບ່ອນຝັງຂອງເຫລົ່ານັ້ນຕາມ
ປົກກະຕິເມື່ອຄົບຮອບໜຶ່ງປີ, ທູດສະຫວັນ
ອົງດຽວກັນນີ້ກໍໄດ້ມອບຂອງເຫລົ່ານັ້ນໃຫ້
ແກ່ຂ້າພະເຈົ້າ ພ້ອມກັບຂໍ້ຜູກມັດດັ່ງນີ້ວ່າ:
ຂ້າພະເຈົ້າຈະຕ້ອງຮັບຜິດຊອບຕໍ່ຂອງ
ເຫລົ່ານີ້ ຖ້າຫາກວ່າຂ້າພະເຈົ້າປະປ່ອຍ
ມັນໄປໂດຍຄວາມປະໝາດ ຫລື ໂດຍ
[ກ]ການລະເລີຍປະການໃດ, ຂ້າພະເຈົ້າຈະ
ຖືກຕັດອອກ; ແຕ່ຖ້າຫາກວ່າຂ້າພະເຈົ້າ
ຈະໃຊ້ຄວາມພະຍາຍາມທັງໝົດທີ່ຈະ [ຂ]ຮັກ
ສາມັນໄວ້, ຈົນກວ່າເພິ່ນຜູ້ເປັນທູດຈະເອີ້ນ
ເອົາມັນຄືນ, ແລ້ວຂອງເຫລົ່ານີ້ຈະໄດ້ຮັບ
ການຄຸ້ມຄອງ.
60 ໃນບໍ່ຊ້າຂ້າພະເຈົ້າກໍເຂົ້າໃຈເຫດຜົນ
ທີ່ຂ້າພະເຈົ້າໄດ້ຮັບພາລະອັນເຂັ້ມງວດ
ໃຫ້ຮັກສາຂອງເຫລົ່ານີ້ໄວ້ໃຫ້ປອດໄພ,
ແລະ ສິ່ງທີ່ທູດໄດ້ເວົ້າໄວ້ວ່າ ເມື່ອຂ້າພະ
ເຈົ້າໄດ້ເຮັດສິ່ງທີ່ເພິ່ນຕ້ອງການໃຫ້ຂ້າພະ
ເຈົ້າເຮັດແລ້ວ, ເພິ່ນຈະເອົາຂອງເຫລົ່ານັ້ນ
ຄືນໄປ. ທັນທີທີ່ຄົນຮູ້ວ່າ ຂ້າພະເຈົ້າໄດ້ຮັບ
ຂອງເຫລົ່ານັ້ນມາ, ຜູ້ຄົນກໍໃຊ້ຄວາມພະຍາ
ຍາມຢ່າງໜັກເພື່ອຈະເອົາມັນໄປຈາກຂ້າ
ພະເຈົ້າ. ກົນອຸບາຍທຸກຢ່າງທີ່ຄິດຂຶ້ນມາ
ໄດ້ ກໍຈະເຮັດເພື່ອເຈດຕະນານັ້ນ. ການຂົ່ມ
ເຫັງນັບມື້ນັບຮຸນແຮງຂຶ້ນກວ່າເກົ່າ, ແລະ
ຜູ້ຄົນເຝົ້າຄອຍຢູ່ຕະຫລອດເວລາເພື່ອ
ຈະເອົາມັນໄປ. ແຕ່ໂດຍຄວາມສະຫລຽວ
ສະຫລາດຂອງພຣະເຈົ້າ, ຂອງເຫລົ່ານີ້ຈຶ່ງ
ຢູ່ໃນກຳມືຂອງຂ້າພະເຈົ້າຢ່າງປອດໄພ.
ຈົນກວ່າຂ້າພະເຈົ້າໃຊ້ຂອງເຫລົ່ານີ້ເຮັດ
ໃຫ້ພາລະທີ່ຕ້ອງການໃຫ້ຂ້າພະເຈົ້າເຮັດ
ສຳເລັດຕາມທີ່ຕົກລົງກັນໄວ້. ເມື່ອທູດເອີ້ນ
ເອົາມັນຄືນ, ຂ້າພະເຈົ້າກໍສົ່ງຂອງເຫລົ່ານີ້
ຄືນໃຫ້ເພິ່ນ; ແລະ ເພິ່ນມີຂອງເຫລົ່ານີ້ຢູ່
ໃນຄວາມອາລັກຂາຂອງເພິ່ນ; ຈົນເຖິງມື້
ນີ້, ຄືວັນທີສອງຂອງເດືອນ ພຶດສະພາ, ໜຶ່ງ
ພັນແປດຮ້ອຍສາມສິບແປດ.
61 ເຖິງຢ່າງໃດກໍຕາມ, ຄວາມສັບສົນນີ້
ຍັງຄົງມີຢູ່ຕໍ່ໄປ, ແລະ ຂ່າວລືດ້ວຍລີ້ນນັບ
ພັນໆມີຢູ່ຕະຫລອດເວລາໃນການແຜ່ຂະ
ຫຍາຍເລື່ອງເທັດກ່ຽວກັບຄອບຄົວຂອງພໍ່
ຂອງຂ້າພະເຈົ້າ, ແລະ ກ່ຽວກັບຕົວຂ້າພະ
ເຈົ້າ. ຖ້າຫາກຂ້າພະເຈົ້າຈະເລົ່າຈັກເລື່ອງ
ໜຶ່ງໃນພັນເລື່ອງເຫລົ່ານີ້, ກໍຄົງຈະໄດ້ເປັນ
ເຫລັ້ມໆ. ເຖິງຢ່າງໃດກໍຕາມ, ມັນໄດ້ຮ້າຍ
ແຮງຂຶ້ນເຖິງຂະໜາດບໍ່ສາມາດອົດທົນ
ໄດ້ ຈົນວ່າຂ້າພະເຈົ້າຈຳເປັນຕ້ອງໄດ້ອອກ
ຈາກແມນເຈດສະເຕີ, ແລະ ໄປຍັງເຂດຊັສ
ຄູຮັນນາກັບພັນລະຍາຂອງຂ້າພະເຈົ້າ, ໃນ
ລັດເພັນໂຊເວເນຍ. ໃນຂະນະທີ່ຕຽມຕົວ
ໄປ—ໂດຍທີ່ຍາກຈົນ, ແລະ ການຂົ່ມເຫັງ
ທີ່ພວກເຮົາໄດ້ຮັບນັ້ນໜັກຫລາຍຈົນເກີນ
ກວ່າທີ່ພວກເຮົາຈະເປັນຢ່າງອື່ນໄດ້—ໃນ
ທ່າມກາງຄວາມທຸກທໍລະມານຂອງພວກ
ເຮົານັ້ນ, ພວກເຮົາໄດ້ພົບກັບສຸພາບບຸລຸດ
ຄົນໜຶ່ງຊື່ວ່າ [ກ]ມາຕິນ ແຮຣິສ, ຜູ້ໄດ້ມາຫາ
ພວກເຮົາ ແລະ ມອບເງິນຈຳນວນຫ້າສິບ
ໂດລາໃຫ້ພວກເຮົາເພື່ອຊ່ວຍເຫລືອພວກ
ເຮົາໃນການເດີນທາງ. ທ່ານແຮຣິສ ອາໄສ
ຢູ່ເມືອງພາໄມຣາ, ເຂດເວນ, ລັດນິວຢອກ,
ແລະ ເປັນເຈົ້າຂອງສວນທີ່ມີຜູ້ນັບໜ້າຖືຕາ
ຄົນໜຶ່ງ.
62 ດ້ວຍຄວາມຊ່ວຍເຫລືອຢ່າງທັນການ

59 *ກ* ຈສ—ປ 1:42.
*ຂ* ຄມພ ພຣະຄຳພີ—ພຣະ
ຄຳພີທີ່ຕ້ອງຮັກສາໄວ້.
61 *ກ* ຄພ 5:1.
ຄມພ ແຮຣິສ, ມາຕິນ.

ນີ້ ຂ້າພະເຈົ້າຈຶ່ງສາມາດໄປເຖິງສະຖານ
ທີ່ອັນ ເປັນຈຸດໝາຍຂອງຂ້າພະເຈົ້າໃນ
ເພັນໂຊເວເນຍ; ແລະ ໃນທັນທີຫລັງຈາກ
ຂ້າພະເຈົ້າໄປເຖິງທີ່ນັ້ນ ຂ້າພະເຈົ້າໄດ້ເລີ່ມ
ຕົ້ນກ່າຍອັກຂະລະຈາກແຜ່ນຈາລຶກ. ຂ້າ
ພະເຈົ້າໄດ້ກ່າຍໄວ້ຫລາຍເຕີບ, ແລະ ໂດຍ
ການໃຊ້ [ກ]ອຸລິມ ແລະ ທຸມມິມ ຂ້າພະເຈົ້າ
ໄດ້ແປຈຳນວນໜຶ່ງ, ຊຶ່ງຂ້າພະເຈົ້າໄດ້ເຮັດ
ໃນລະຫວ່າງເວລາໄປເຖິງບ້ານພໍ່ຂອງພັນ
ລະຍາຂອງຂ້າພະເຈົ້າ, ໃນເດືອນທັນວາ,
ແລະ ເດືອນກຸມພາຕໍ່ມາ.
63 ມື້ໜຶ່ງໃນເດືອນກຸມພານີ້, ທ່ານມາຕິນ
ແຮຣິສ ທີ່ກ່າວມາກ່ອນນັ້ນ ໄດ້ມາບ້ານ
ຂອງພວກເຮົາ, ຮັບເອົາອັກຂະລະທີ່ຂ້າພະ
ເຈົ້າໄດ້ກ່າຍຈາກແຜ່ນຈາລຶກ, ແລະ ໄດ້
ເອົາມັນໄປເມືອງນິວຢອກ. ສຳລັບເລື່ອງທີ່
ໄດ້ເກີດຂຶ້ນກັບເພິ່ນ ແລະ ອັກຂະລະເຫລົ່າ
ນັ້ນ, ຂ້າພະເຈົ້າຈະອ້າງເຖິງເລື່ອງລາວ
ຈາກສະຖານະການຂອງເພິ່ນເອງ, ດັ່ງທີ່
ເພິ່ນໄດ້ເລົ່າໃຫ້ຂ້າພະເຈົ້າຟັງຫລັງຈາກ
ເພິ່ນໄດ້ກັບຄືນມາ, ຊຶ່ງມີດັ່ງນີ້:
64 "ຂ້າພະເຈົ້າໄດ້ໄປເມືອງນິວຢອກ,
ແລະ ໄດ້ສະແດງອັກຂະລະຊຶ່ງແປແລ້ວ,
ພ້ອມກັບຄຳແປອັກຂະລະດັ່ງກ່າວ, ຕໍ່ອາ
ຈານຊາລີ ແອນທັນ, ສຸພາບບຸລຸດຜູ້ມີຊື່
ສຽງໃນຄວາມຊ່ຽວຊານທາງດ້ານພາສາ.
ອາຈານແອນທັນໄດ້ກ່າວວ່າ ຄຳແປນັ້ນ
ຖືກຕ້ອງ, ດີກວ່າການແປໃດໆຈາກພາສາ
ເອຢິບທີ່ເພິ່ນເຄີຍເຫັນມາກ່ອນ. ຈາກນັ້ນ
ຂ້າພະເຈົ້າໄດ້ໃຫ້ເພິ່ນເຫັນອັກຂະລະທີ່
ຍັງບໍ່ໄດ້ແປເທື່ອ, ແລະ ເພິ່ນໄດ້ກ່າວວ່າ
ມັນເປັນພາສາເອຢິບ, ເຄນເດຍ, ອັດຊີ
ເຣຍ, ແລະ ອາຣັບ; ແລະ ເພິ່ນໄດ້ກ່າວວ່າ
ມັນເປັນອັກຂະລະແທ້. ເພິ່ນໄດ້ມອບໃບ
ຮັບຮອງໃຫ້ຂ້າພະເຈົ້າ, ຊຶ່ງສະແດງຕໍ່ຜູ້ຄົນ
ຂອງພາໄມຣາວ່ານີ້ຄືອັກຂະລະແທ້, ແລະ
ວ່າ ການແປເທົ່າທີ່ໄດ້ແປໄວ້ເຊັ່ນນັ້ນກໍຖືກ
ຕ້ອງ. ຂ້າພະເຈົ້າໄດ້ຮັບເອົາໃບຮັບຮອງ
ແລະ ໃສ່ໄວ້ໃນກະເປົາ, ແລະ ໃນຂະນະ
ທີ່ຈະອອກບ້ານໄປ, ເມື່ອທ່ານແອນທັນ
ໄດ້ເອີ້ນຂ້າພະເຈົ້າກັບຄືນໄປ, ແລະ ໄດ້
ຖາມຂ້າພະເຈົ້າວ່າ ຊາຍໜຸ່ມຄົນນັ້ນຮູ້ໄດ້
ແນວໃດວ່າມີແຜ່ນຈາລຶກຄຳໃນສະຖານ
ທີ່ບ່ອນລາວພົບເຫັນ. ຂ້າພະເຈົ້າຕອບວ່າ
ທູດອົງໜຶ່ງຂອງພຣະເຈົ້າໄດ້ເປີດເຜີຍແກ່
ລາວ.
65 "ຫລັງຈາກນັ້ນເພິ່ນໄດ້ກ່າວກັບຂ້າ
ພະເຈົ້າວ່າ 'ຂ້າພະເຈົ້າຂໍເບິ່ງໃບຮັບຮອງ
ໃບນັ້ນແດ່.' ຂ້າພະເຈົ້າໄດ້ຢິບເອົາໃບຮັບ
ຮອງອອກຈາກກະເປົາຂອງຂ້າພະເຈົ້າ
ຕາມນັ້ນ ແລະ ໄດ້ມອບມັນໃຫ້ເພິ່ນ, ເມື່ອ
ເພິ່ນຈັບເອົາໄປ ເພິ່ນໄດ້ຈີກມັນຖິ້ມເປັນ
ຕ່ອນໆ, ໂດຍກ່າວວ່າດຽວນີ້ບໍ່ມີສິ່ງທີ່ເອີ້ນ
ກັນວ່າການປະຕິບັດຂອງ [ກ]ເຫລົ່າທູດອີກ
ແລ້ວ, ແລະ ຖ້າຫາກຂ້າພະເຈົ້າຈະນຳ
ແຜ່ນຈາລຶກມາໃຫ້ເພິ່ນ, ເພິ່ນກໍຈະແປໃຫ້.
ຂ້າພະເຈົ້າໄດ້ບອກເພິ່ນວ່າ ສ່ວນໜຶ່ງຂອງ
ແຜ່ນຈາລຶກນັ້ນຖືກ [ຂ]ຜະນຶກໄວ້, ແລະ ຂ້າ
ພະເຈົ້າຖືກຫ້າມບໍ່ໃຫ້ເອົາມັນມາ. ເພິ່ນໄດ້
ຕອບວ່າ, 'ສະນັ້ນຂ້າພະເຈົ້າກໍອ່ານໜັງສື
ທີ່ຜະນຶກໄວ້ນັ້ນບໍ່ໄດ້.' ຂ້າພະເຈົ້າໄດ້ຈາກ
ເພິ່ນໄປ ແລະ ໄດ້ໄປຫາ ດຣ. ມິດໂຈ, ຜູ້
ໄດ້ຮັບຮອງສິ່ງທີ່ອາຈານແອນທັນກ່າວໄວ້
ກ່ຽວກັບການແປ ທັງອັກຂະລະ ແລະ ການ
ແປ."

. . . . . . .

*ອໍລີເວີ ຄາວເດີຣີ ຮັບໃຊ້ເປັນຜູ້ຂຽນການ*

62 *ກ* ຄມພ ອຸລິມ ແລະ ທຸມມິມ.
65 *ກ* ຄມພ ທູດ, ເທວະດາ.
*ຂ* ອຊຢ 29:11–12; 2 ນຟ 27:10; ອທ 4:4–7.

*ແປພຣະຄຳພີມໍມອນ— ໂຈເຊັບ ແລະ ອໍລີເວີ ຮັບຖານະປະໂລຫິດແຫ່ງອາໂຣນຈາກໂຢຮັນບັບຕິສະໂຕ—ພວກເພິ່ນໄດ້ຮັບບັບຕິສະມາ, ໄດ້ຮັບການແຕ່ງຕັ້ງ, ແລະໄດ້ຮັບວິນຍານແຫ່ງການທຳນາຍ. (ຂໍ້ທີ 66–75.)*

66 ໃນວັນທີ 5 ເດືອນເມສາ, 1829, [ກ]ອໍລີເວີ ຄາວເດີຣີ ໄດ້ມາບ້ານຂອງຂ້າພະເຈົ້າ, ຊຶ່ງຂ້າພະເຈົ້າບໍ່ເຄີຍເຫັນລາວມາກ່ອນເລີຍ. ລາວບອກຂ້າພະເຈົ້າວ່າ ໂດຍທີ່ສິດສອນຢູ່ໂຮງຮຽນໃກ້ບ້ານພໍ່ຂອງຂ້າພະເຈົ້າ ແລະ ພໍ່ຂອງຂ້າພະເຈົ້າເປັນຜູ້ໜຶ່ງທີ່ສົ່ງລູກໄປໂຮງຮຽນນັ້ນ, ລາວຈຶ່ງໄປພັກຢູ່ບ້ານຂອງເພິ່ນຊົ່ວໄລຍະໜຶ່ງ, ແລະ ໃນຊ່ວງທີ່ພັກເຊົາຢູ່ທີ່ນັ້ນ ຄອບຄົວຂອງຂ້າພະເຈົ້າໄດ້ເລົ່າໃຫ້ລາວຟັງກ່ຽວກັບເລື່ອງທີ່ຂ້າພະເຈົ້າໄດ້ຮັບແຜ່ນຈາລຶກ, ດັ່ງນັ້ນລາວຈຶ່ງໄດ້ມາເພື່ອສອບຖາມເບິ່ງ.

67 ສອງມື້ຫລັງຈາກນາຍຄາວເດີຣີໄດ້ມາເຖິງ (ຊຶ່ງເປັນວັນທີ 7 ເດືອນເມສາ) ຂ້າພະເຈົ້າກໍເລີ່ມແປພຣະຄຳພີມໍມອນ, ແລະ ລາວໄດ້ຂຽນໃຫ້ຂ້າພະເຈົ້າ.

. . . . . . .

68 ພວກເຮົາຍັງສືບຕໍ່ເຮັດການແປຕໍ່ໄປ, ເມື່ອໃນເດືອນຕໍ່ມາ (ເປັນເດືອນພຶດສະພາ, 1829), ມື້ໜຶ່ງ ພວກເຮົາທັງສອງໄດ້ເຂົ້າໄປໃນປ່າ ເພື່ອອະທິຖານ ແລະ ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບການຮັບ [ກ]ບັບຕິສະມາເພື່ອ [ຂ]ການປົດບາບ, ຊຶ່ງພວກເຮົາພົບວ່າມັນມີກ່າວໄວ້ຢູ່ໃນແຜ່ນຈາລຶກນັ້ນ. ໃນຂະນະທີ່ພວກເຮົາອະທິຖານ ແລະ ເອີ້ນຫາພຣະຜູ້ເປັນເຈົ້າຢູ່ນັ້ນ, [ຄ]ທູດອົງໜຶ່ງຈາກສະຫວັນໄດ້ລົງມາຈາກ [ງ]ເມກແຫ່ງຄວາມສະຫວ່າງ ແລະ ຫລັງຈາກເພິ່ນປົກ [ຈ]ມືໃສ່ຫົວພວກເຮົາແລ້ວ, ເພິ່ນໄດ້ [ສ]ແຕ່ງຕັ້ງພວກເຮົາໂດຍກ່າວວ່າ:

69 *ແກ່ພວກທ່ານ ພີ່ນ້ອງຜູ້ຮັບໃຊ້ຮ່ວມກັບຂ້າພະເຈົ້າ, ໃນພຣະນາມຂອງພຣະເມຊີອາ, ຂ້າພະເຈົ້າຂໍມອບ [ກ]ຖານະປະໂລຫິດແຫ່ງອາໂຣນ, ຊຶ່ງຖືຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ, ແລະ ຂອງພຣະກິດຕິຄຸນແຫ່ງການກັບໃຈ, ແລະ ຂອງການບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ ແລະ ສິ່ງນີ້ຈະບໍ່ຖືກເອົາໄປຈາກແຜ່ນດິນໂລກອີກຈັກເທື່ອ ຈົນກວ່າພວກບຸດຂອງ [ຂ]ເລວີຈະຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຄືນອີກໃນຄວາມຊອບທຳ.*

70 ເພິ່ນໄດ້ກ່າວວ່າ ຖານະປະໂລຫິດແຫ່ງອາໂຣນນີ້ບໍ່ມີອຳນາດທີ່ຈະເອົາມືປົກຫົວເພື່ອມອບ [ກ]ຂອງປະທານແຫ່ງພຣະວິນຍານບໍລິສຸດ, ແຕ່ວ່າອຳນາດນີ້ຈະຖືກມອບໃຫ້ພວກເຮົາໃນພາຍຫລັງ; ແລະ ເພິ່ນໄດ້ສັ່ງໃຫ້ພວກເຮົາໄປຮັບບັບຕິສະມາ, ແລະເພິ່ນໃຫ້ຄຳແນະນຳພວກເຮົາວ່າ ໃຫ້ຂ້າພະເຈົ້າໃຫ້ບັບຕິສະມາແກ່ອໍລີເວີ ຄາວເດີຣີກ່ອນ, ແລະ ຫລັງຈາກນັ້ນໃຫ້ລາວໃຫ້ບັບຕິສະມາແກ່ຂ້າພະເຈົ້າ.

71 ພວກເຮົາຈຶ່ງໄປຮັບບັບຕິສະມາຕາມ

66 *ກ* ຄມພ ຄາວເດີຣີ, ອໍລີເວີ.
68 *ກ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຂ* ຄມພ ປົດບາບ, ການປົດບາບ.
*ຄ* ຄມພ ໂຢຮັນບັບຕິສະໂຕ.
*ງ* ຈບຊ 11:25; ອທ 2:4–5, 14; ຄພ 34:7.
*ຈ* ຫຼຊ 1:5. ຄມພ ມື, ການວາງ.
*ສ* ຄມພ ສິດອຳນາດ; ແຕ່ງຕັ້ງ, ການແຕ່ງຕັ້ງ.
69 *ກ* ຄມພ ຖານະປະໂລຫິດແຫ່ງອາໂຣນ.
*ຂ* ພບຍ 10:8; ຄພ 13; 124:39. ຄມພ ເລວີ—ເຜົ່າຂອງເລວີ.
70 *ກ* ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.

ນັ້ນ. ຂ້າພະເຈົ້າໄດ້ໃຫ້ບັບຕິສະມາແກ່ລາວ
ກ່ອນ, ແລະ ຈາກນັ້ນລາວໄດ້ໃຫ້ບັບຕິ
ສະມາແກ່ຂ້າພະເຈົ້າ—ຫລັງຈາກນັ້ນ ຂ້າ
ພະເຈົ້າໄດ້ວາງມືເທິງຫົວຂອງລາວ ແລະ
ໄດ້ແຕ່ງຕັ້ງລາວສູ່ຖານະປະໂລຫິດແຫ່ງ
ອາໂຣນ, ແລະ ຈາກນັ້ນລາວໄດ້ວາງມື
ເທິງຫົວຂອງຂ້າພະເຈົ້າ ແລະ ແຕ່ງຕັ້ງຂ້າ
ພະເຈົ້າສູ່ຖານະປະໂລຫິດຢ່າງດຽວກັນ—
ເພາະວ່າພວກເຮົາໄດ້ຖືກບັນຊາໃຫ້ເຮັດ
ແນວນັ້ນ.*
72 ໃນໂອກາດນີ້ທູດສະຫວັນໄດ້ມາຢ້ຽມ
ຢາມ ແລະ ມອບຖານະປະໂລຫິດໃຫ້ພວກ
ເຮົາ, ໄດ້ກ່າວວ່າ ເພິ່ນແມ່ນໂຢຮັນ, ຄົນ
ດຽວກັນກັບຜູ້ທີ່ຊື່ວ່າ [ກ]ໂຢຮັນບັບຕິສະໂຕ
ໃນພຣະຄຳພີໃໝ່, ແລະ ວ່າເພິ່ນກະທຳ
ໄປພາຍໃຕ້ການຊີ້ນຳຂອງ [ຂ]ເປໂຕ, [ຄ]ຢາ
ໂກໂບ ແລະ [ງ]ໂຢຮັນ, ຜູ້ຖື [ຈ]ຂໍກະແຈຂອງ
ຖານະປະໂລຫິດແຫ່ງ [ສ]ເມນຄີເສເດັກ, ຊຶ່ງ
ຖານະປະໂລຫິດນີ້, ເພິ່ນໄດ້ກ່າວວ່າຈະຖືກ
ມອບໃຫ້ພວກເຮົາໃນພາຍຫລັງ, ແລະວ່າ
ຂ້າພະເຈົ້າຈະຖືກເອີ້ນວ່າ [ຊ]ແອວເດີຄົນທຳ
ອິດຂອງສາດສະໜາຈັກ, ແລະ ລາວ (ອໍລີ
ເວີ ຄາວເດີຣີ) ເປັນຄົນທີສອງ. ພວກເຮົາ
ທັງສອງໄດ້ຮັບການແຕ່ງຕັ້ງດ້ວຍມືຂອງ
ທູດຜູ້ນີ້, ແລະ ໄດ້ຮັບບັບຕິສະມາໃນວັນທີ
ສິບຫ້າ ເດືອນພຶດສະພາ, 1829.
73 ໃນທັນທີທີ່ພວກເຮົາຂຶ້ນມາຈາກນ້ຳ
ຫລັງຈາກໄດ້ຮັບບັບຕິສະມາແລ້ວ, ພວກ
ເຮົາໄດ້ປະສົບກັບພອນອັນຍິ່ງໃຫຍ່ ແລະ
ປະເສີດຈາກພຣະບິດາເທິງສະຫວັນຂອງ
ພວກເຮົາ. ໃນທັນທີທີ່ຂ້າພະເຈົ້າໄດ້ໃຫ້
ບັບຕິສະມາແກ່ອໍລີເວີ ຄາວເດີຣີ, [ກ]ພຣະ
ວິນຍານບໍລິສຸດກໍໄດ້ສະເດັດມາສະຖິດຢູ່
ກັບລາວ, ແລະ ລາວໄດ້ຢືນຂຶ້ນ ແລະ [ຂ]ທຳ
ນາຍຫລາຍຢ່າງທີ່ຈະບັງເກີດຂຶ້ນໃນບໍ່ຊ້າ
ນັ້ນ. ແລະ ອີກຕອນໜຶ່ງໃນທັນທີທີ່ຂ້າພະ
ເຈົ້າໄດ້ຮັບບັບຕິສະມາຈາກລາວ, ຂ້າພະ
ເຈົ້າກໍມີວິນຍານແຫ່ງການທຳນາຍ, ເມື່ອ
ຂ້າພະເຈົ້າຢືນຂຶ້ນ, ຂ້າພະເຈົ້າໄດ້ທຳນາຍ
ກ່ຽວກັບການເລີ່ມຕົ້ນສາດສະໜາຈັກແຫ່ງ
ນີ້ຂຶ້ນ, ແລະ ອີກຫລາຍຢ່າງທີ່ກ່ຽວຂ້ອງ
ກັບສາດສະໜາຈັກ, ແລະ ຂອງລູກຫລານ
ມະນຸດລຸ້ນນີ້. ພວກເຮົາເຕັມໄປດ້ວຍພຣະ
ວິນຍານບໍລິສຸດ, ແລະ ປິຕິຍິນດີໃນພຣະ
ເຈົ້າແຫ່ງຄວາມລອດຂອງພວກເຮົາ.
74 ບັດນີ້ຈິດໃຈຂອງພວກເຮົາສະຫວ່າງ

*ອໍລີເວີ ຄາວເດີຣີ ບັນຍາຍເຫດການດັ່ງກ່າວໄວ້ດັ່ງນີ້: "ເປັນວັນທີ່ບໍ່ສາມາດລືມໄດ້—ທີ່ໄດ້ນັ່ງຟັງສຽງກ່າວຊຶ່ງກ່າວຕາມການດົນໃຈຈາກສະຫວັນ, ປຸກໃຫ້ເກີດຄວາມກະຕັນຍູໃນຊວງເອິກ! ວັນແລ້ວວັນເລົ່າຂ້າພະເຈົ້າໄດ້ຂຽນຕໍ່ໄປ, ໂດຍບໍ່ຖືກລົບກວນ, ໄດ້ຂຽນຈາກປາກຂອງລາວ, ໃນຂະນະທີ່ລາວແປດ້ວຍອູລີມ ແລະ ທູມມີມ, ຫລື, ຕາມທີ່ຊາວນີໄຟເອີ້ນວ່າ, 'ເຄື່ອງແປຄວາມໝາຍ,' ປະຫວັດສາດ ຫລື ບັນທຶກທີ່ເອີ້ນ 'ພຣະຄຳພີມໍມອນ.'

"ໃນການສັງເກດເຫັນ, ແມ່ນແຕ່ພຽງສອງສາມຄຳ, ເຖິງເລື່ອງລາວທີ່ໜ້າສົນໃຈຊຶ່ງມໍມອນ ແລະ ລູກຊາຍທີ່ຊື່ສັດຂອງເພິ່ນ, ໂມໂຣໄນ, ໄດ້ໃຫ້ໄວ້ກ່ຽວກັບຜູ້ຄົນທີ່ເທື່ອໜຶ່ງເຄີຍເປັນທີ່ຮັກຫອມ ແລະ ໂປດປານຂອງສະຫວັນ, ກໍເກີນກວ່າຄວາມມຸ້ງໝາຍຂອງຂ້າພະເຈົ້າໃນຂະນະນີ້; ສະນັ້ນຂ້າພະເຈົ້າຈຶ່ງຈະເລື່ອນເລື່ອງນີ້ອອກໄປໃນອະນາຄົດ, ແລະ, ດັ່ງທີ່ຂ້າພະເຈົ້າໄດ້ກ່າວໃນຕອນຕົ້ນ, ວ່າຈະມຸ້ງໄປກ່າວບາງຢ່າງທີ່ກ່ຽວຂ້ອງໂດຍກົງກັບການເລີ່ມຕົ້ນຂອງສາດສະໜາຈັກນີ້, ຊຶ່ງອາດຈະເປັນໜ້າສົນໃຈຕໍ່ຫລາຍພັນຄົນທີ່ກ້າວອອກມາຂ້າງໜ້າ,

72 *ກ* ຄນພ ໂຢຮັນບັບຕິສະໂຕ.
*ຂ* ຄພ 27:12–13.
ຄນພ ເປໂຕ.
*ຄ* ຄນພ ຢາໂກໂບ, ລູກຊາຍຂອງເສເບດາຍ.
*ງ* ຄນພ ໂຢຮັນ, ລູກຊາຍຂອງເຊເບດາຍ.
*ຈ* ຄນພ ຂໍກະແຈຂອງຖານະປະໂລຫິດ.
*ສ* ຄນພ ຖານະປະໂລຫິດແຫ່ງເມນຄີເສເດັກ.
*ຊ* ຄນພ ແອວເດີ.
73 *ກ* ຄນພ ພຣະວິນຍານບໍລິສຸດ.
*ຂ* ຄນພ ທຳນາຍ, ການທຳນາຍ, ຄຳທຳນາຍ.

ແລ້ວ, ພວກ ເຮົາ ຈຶ່ງ ເລີ່ມ ເຫັນ ພຣະ ຄຳ ພີ
ເປີດອອກສູ່ [ກ]ຄວາມເຂົ້າໃຈຂອງພວກເຮົາ, ແລະ ໝາຍເຖິງ ແລະ ເຈດຕະນາ [ຂ]ທີ່ແທ້ຈິງຂອງຂໍ້ຄວາມທີ່ລຶກລັບຫລາຍກວ່າໄດ້ຖືກເປີດເຜີຍ ແກ່ພວກເຮົາໃນວິທີທີ່ພວກເຮົາບໍ່ເຄີຍບັນລຸເຖິງກ່ອນໜ້ານີ້, ຫລື ບໍ່ເຄີຍນຶກເຖິງມາກ່ອນ. ໃນເວລາດຽວກັນນັ້ນພວກເຮົາໄດ້ຖືກບັງຄັບໃຫ້ຮັກສາເລື່ອງທີ່ພວກເຮົາໄດ້ຮັບຖານະປະໂລຫິດ ແລະ ຮັບບັບຕິສະມາຂອງພວກເຮົາໄວ້ເປັນຄວາມລັບ, ເນື່ອງຈາກວິນຍານແຫ່ງການຂົ່ມເຫັງຊຶ່ງສະແດງຕົນໃຫ້ປະຈັກໃນແຖວນັ້ນ.
75 ພວກເຮົາຖືກຂົ່ມຂູ່ວ່າຈະຖືກລຸມທຳຮ້າຍ, ເປັນບາງຄັ້ງ, ແລະ ນີ້ຄືກັນ, ຈາກບັນດາອາຈານຝ່າຍສາດສະໜາ. ແລະ ເຈດຕະນາຂອງເຂົາເຈົ້າທີ່ຈະລຸມທຳຮ້າຍພວກເຮົາໄດ້ຖືກຂັດຂວາງ ໂດຍອິດທິພົນຂອງຄອບຄົວຂອງພໍ່ຂອງພັນລະຍາຂອງຂ້າພະເຈົ້າ (ພາຍໃຕ້ການປົກປັກຮັກສາແຫ່ງສະຫວັນ), ຜູ້ເລີ່ມມີໄມຕີຕໍ່ຂ້າພະເຈົ້າ, ແລະ ຜູ້ໄດ້ຕໍ່ຕ້ານກຸ່ມອັນຕະພານ, ແລະ ເຕັມໃຈໃຫ້ຂ້າພະເຈົ້າເຮັດການແປຕໍ່ໄປໂດຍບໍ່ມີການລົບກວນ; ແລະ ສະນັ້ນຈຶ່ງໄດ້ສະເໜີ ແລະ ສັນຍາທີ່ຈະປົກປ້ອງພວກເຮົາຈາກການກະທຳທັງໝົດທີ່ຜິດກົດໝາຍໃດໆ, ເທົ່າທີ່ເຂົາເຈົ້າສາມາດເຮັດໄດ້.

---

ແລະ ຍອມຮັບເອົາພຣະກິດຕິຄຸນຂອງພຣະຄຣິດທ່າມກາງຄວາມບໍ່ພໍໃຈຂອງຄົນທີ່ບໍ່ຍອມຮັບຟັງເຫດຜົນ ແລະ ການໃສ່ຮ້າຍຂອງຄົນໜ້າຊື່ໃຈຄົດ.

"ບໍ່ມີມະນຸດຄົນໃດ, ດ້ວຍສະຕິສຳປະສັນຍະຂອງເຂົາ, ຈະສາມາດແປ ແລະ ຂຽນຄຳແນະນຳທີ່ມອບໃຫ້ແກ່ຊາວນີໄຟຈາກພຣະໂອດຂອງພຣະຜູ້ຊ່ວຍໃຫ້ລອດໄດ້, ເຖິງວິທີຊັດເຈນທີ່ມະນຸດຈະສ້າງສາດສະໜາຈັກຂອງພຣະອົງຂຶ້ນ, ແລະ ໂດຍສະເພາະຢ່າງຍິ່ງ ເມື່ອຄວາມເສື່ອມຊາມເລີ່ມຂະຫຍາຍຄວາມບໍ່ແນ່ນອນອອກໄປໃນທຸກຮູບແບບ ແລະ ທຸກລະບົບທີ່ປະຕິບັດກັນໃນບັນດາມະນຸດ, ໂດຍບໍ່ປາດຖະໜາສິດທິພິເສດທີ່ຈະສະແດງຄວາມຍິນດີຈາກໃຈດ້ວຍການຖືກຝັງໃນຫລຸມນ້ຳ, ເພື່ອຕອບສະໜອງ 'ຄວາມສຳນຶກອັນໃສສະອາດໂດຍການຟື້ນຄືນພຣະຊົນຂອງພຣະເຢຊູຄຣິດ.'

"ຫລັງຈາກການຂຽນເລື່ອງລາວທີ່ໃຫ້ໄວ້ ກ່ຽວກັບການປະຕິບັດສາດສະໜາກິດຂອງພຣະຜູ້ຊ່ວຍໃຫ້ລອດຕໍ່ສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອສາຍຂອງຢາໂຄບ, ໃນທະວີບນີ້, ກໍເຫັນໄດ້ງ່າຍ, ດັ່ງທີ່ສາດສະດາໄດ້ກ່າວວ່າຈະເປັນເຊັ່ນນັ້ນ, ວ່າຄວາມມືດຈະປົກຄຸມແຜ່ນດິນໂລກ ແລະ ຄວາມມືດມົວຈະຄອບງຳຈິດໃຈຂອງຜູ້ຄົນ. ເມື່ອໄຕ່ຕອງຕໍ່ໄປ ຈະເຫັນໄດ້ງ່າຍວ່າທ່າມກາງການຜິດຖຽງກັນ ແລະ ສຽງອຶກກະທຶກກ່ຽວກັບສາດສະໜາ, ບໍ່ມີໃຜເລີຍທີ່ມີສິດອຳນາດຈາກພຣະເຈົ້າທີ່ຈະປະຕິບັດພິທີການຂອງພຣະກິດຕິຄຸນ. ເພາະຈະມີຄຳຖາມວ່າ, ມະນຸດມີສິດອຳນາດບໍທີ່ຈະປະຕິບັດໃນພຣະນາມຂອງພຣະຄຣິດ, ຜູ້ປະຕິເສດການເປີດເຜີຍ, ເມື່ອປະຈັກພະຍານເຖິງພຣະອົງໜ້ອຍໄປກວ່າວິນຍານແຫ່ງການທຳນາຍ, ແລະ ສາດສະໜາຂອງພຣະອົງມີພື້ນຖານ, ຖືກສ້າງຂຶ້ນ, ແລະ ຄ້ຳຈູນດ້ວຍການເປີດເຜີຍໂດຍກົງ, ໃນທຸກຍຸກຂອງໂລກເມື່ອພຣະອົງມີຜູ້ຄົນຢູ່ເທິງແຜ່ນດິນໂລກ? ຖ້າຫາກຄວາມຈິງເຫລົ່ານີ້ຖືກຝັງໄວ້, ແລະ ຖືກປົກປິດໄວ້ຢ່າງລະມັດລະວັງໂດຍຜູ້ຄົນ ຊຶ່ງເລ່ຫລ່ຽມຂອງພວກເຂົາຈະຖືກເປີດເຜີຍ ຖ້າຫາກເມື່ອໃດກໍຕາມມັນຖືກອະນຸຍາດໃຫ້ສ່ອງແສງຢູ່ໃນໃບໜ້າຂອງມະນຸດ, ມັນບໍ່ໄດ້ຖືກຝັງໄວ້ສຳລັບພວກເຮົາ; ແລະ ພວກເຮົາພຽງແຕ່ຄອຍຖ້າພຣະບັນຊາທີ່ວ່າ 'ຈົ່ງລຸກຂຶ້ນ ແລະ ຮັບບັບຕິສະມາ.'

"ຄວາມປາດຖະໜານີ້ບໍ່ໄດ້ລໍຖ້າດົນກ່ອນມັນໄດ້ເກີດເປັນຈິງ. ພຣະຜູ້ເປັນເຈົ້າ, ຜູ້ມີຄວາມເມດຕາຢ່າງຫລວງຫລາຍ, ແລະ ເຕັມພຣະໄທສະເໝີທີ່ຈະຕອບຄຳອະທິຖານຢ່າງບໍ່ຂາດສາຍຂອງຜູ້ຖ່ອມຕົວ, ຫລັງຈາກພວກເຮົາເອີ້ນຫາພຣະອົງຢ່າງແຮງກ້າ, ໄກຈາກບ່ອນພັກຂອງມະນຸດ, ໄດ້ສະເດັດມາເພື່ອສະແດງພຣະປະສົງຂອງພຣະອົງໃຫ້ປະຈັກແກ່ພວກເຮົາ. ໃນທັນໃດນັ້ນ, ເໝືອນຈາກທ່າມກາງຊົ່ວນິລັນດອນ, ສຸລະສຽງຂອງພຣະ

---

74 ກ ຄມພ ເຂົ້າໃຈ, ຄວາມເຂົ້າໃຈ.

ຂ ຢຣ 16:13.

ຜູ້ໄຖ່ໄດ້ກ່າວ ຄວາມສະຫງົບສຸກແກ່ພວກເຮົາ, ໃນຂະນະທີ່ມ່ານເປີດອອກ ແລະ ທູດຂອງພຣະເຈົ້າໄດ້ລົງມາ ຫຸ້ມຫໍ່ດ້ວຍລັດສະໝີພາບ, ແລະ ມອບຂ່າວສານທີ່ລໍ້າຖ້າດ້ວຍຄວາມກະຕືລືລົ້ນ, ແລະ ຂໍກະແຈຂອງພຣະກິດຕິຄຸນແຫ່ງການກັບໃຈ. ຊ່າງຊື່ນຊົມແທ້ໆ! ຊ່າງແປກປະຫລາດແທ້ໆ! ຊ່າງອັດສະຈັນໃຈແທ້ໆ! ໃນຂະນະທີ່ ໂລກທຸກທໍລະມານ ແລະ ວຸ້ນວາຍ—ໃນຂະນະທີ່ຫລາຍລ້ານຄົນລູບຄໍາເໝືອນຄົນຕາບອດຊອກຫາກໍາແພງ, ແລະ ໃນຂະນະທີ່ຜູ້ຄົນທັງປວງຢູ່ກັບຄວາມບໍ່ແນ່ນອນໃຈ, ດັ່ງຝູງຊົນທົ່ວໄປ, ຕາຂອງພວກເຮົາໄດ້ເຫັນ, ຫູຂອງພວກເຮົາໄດ້ຍິນ, ດັ່ງໃນ 'ຄວາມເຈີດຈ້າຂອງກາງເວັນ'; ແມ່ນແລ້ວ, ຍິ່ງກວ່ານັ້ນ—ເໜືອກວ່າແສງເຫລື້ອມລະຍິບລະຍັບຂອງແສງຕາເວັນໃນເດືອນພຶດສະພາ, ຊຶ່ງເວລານັ້ນສ່ອງປະກາຍໃສ່ເທິງໜ້າໂລກ! ຈາກນັ້ນສຽງຂອງເພິ່ນ, ເຖິງແມ່ນນຸ້ມນວນ, ຈະສຽບແທງເຂົ້າຈົນເຖິງກາງໃຈ, ແລະ ຖ້ອຍຄໍາຂອງເພິ່ນ, 'ຂ້າພະເຈົ້າເປັນເພື່ອນຜູ້ຮັບໃຊ້ຂອງທ່ານ,' ກໍາຈັດຄວາມຢ້ານກົວທຸກຢ່າງ. ພວກເຮົາຟັງ, ພວກເຮົາ ຈ້ອງເບິ່ງ, ພວກເຮົາຊົມເຊີຍ! ສຽງນັ້ນເປັນສຽງຂອງທູດຈາກລັດສະໝີພາບ, ເປັນຂ່າວສານຈາກພຣະຜູ້ສູງສຸດ! ແລະ ເມື່ອພວກເຮົາໄດ້ຍິນ ພວກເຮົາໄດ້ປິຕິຍິນດີ, ໃນຂະນະທີ່ຄວາມຮັກຂອງພຣະອົງຮ້ອນຮົນຢູ່ໃນຈິດວິນຍານຂອງພວກເຮົາ, ແລະ ພວກເຮົາຖືກໂອບໄວ້ໃນພາບນິມິດຂອງຜູ້ຊົງລິດອໍານາດຍິ່ງໃຫຍ່! ມີບ່ອນສົງໄສຢູ່ບໍ? ບໍ່ມີເລີຍ; ຄວາມບໍ່ແນ່ນອນໃຈໄດ້ໝົດໄປ, ຄວາມສົງໄສໄດ້ຈົມສະຫລາຍໄປ, ໃນຂະນະທີ່ນິຍາຍ ແລະ ເລື່ອງຫລອກລວງຫລົບໜີໄປຕະຫລອດການ!

"ແຕ່, ທ່ານທີ່ເຄົາລົບ, ຈົ່ງຄິດຕໍ່ໄປໜ້ອຍໜຶ່ງ, ຊ່າງຊື່ນຊົມຢູ່ໃນໃຈຂອງພວກເຮົາແທ້ໆ, ແລະ ດ້ວຍຄວາມປະຫລາດໃຈຫລາຍ ແທ້ໆທີ່ພວກເຮົາໄດ້ຄຸເຂົ່າລົງ, (ເພາະວ່າແມ່ນໃຜຈະບໍ່ຄຸເຂົ່າລົງເພາະພອນເຊັ່ນນັ້ນ?) ເມື່ອພວກເຮົາໄດ້ຮັບຖານະປະໂລຫິດສັກສິດພາຍໃຕ້ມືຂອງເພິ່ນ ໃນຂະນະທີ່ເພິ່ນກ່າວວ່າ, 'ເພື່ອນຜູ້ຮັບໃຊ້ຮ່ວມກັບຂ້າພະເຈົ້າ, ໃນພຣະນາມຂອງພຣະເມຊີອາ, ຂ້າພະເຈົ້າຂໍມອບຖານະປະໂລຫິດນີ້ ແລະ ສິດອໍານາດຂອງມັນ, ຊຶ່ງຈະຄົງຢູ່ເທິງແຜ່ນດິນໂລກ, ຈົນກວ່າພວກບຸດຂອງເລວີຈະຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຄືນອີກໃນຄວາມຊອບທໍາ!'

"ຂ້າພະເຈົ້າຈະບໍ່ພະຍາຍາມບັນຍາຍຄວາມຮູ້ສຶກໃນໃຈດວງນີ້ຕໍ່ທ່ານ, ຫລື ຄວາມງາມອັນສະຫງ່າຜ່າເຜີຍ ແລະ ລັດສະໝີພາບ ຊຶ່ງອ້ອມຮອບພວກເຮົາຢູ່ໃນເວລານັ້ນ; ແຕ່ທ່ານຈະເຊື່ອເມື່ອຂ້າພະເຈົ້າກ່າວວ່າ ແຜ່ນດິນໂລກ, ຫລື ມະນຸດ, ພ້ອມກັບຄວາມຈັບໃຈຂອງເວລາ, ກໍບໍ່ສາມາດເລີ່ມຕົ້ນພາສາໃນວິທີທີ່ໜ້າສົນໃຈ ແລະ ດີເລີດໄດ້ເທົ່າກັບຜູ້ບໍລິສຸດຄົນນີ້. ບໍ່ເລີຍ; ທັງແຜ່ນດິນໂລກນີ້ກໍບໍ່ມີອໍານາດທີ່ຈະໃຫ້ຄວາມຊື່ນຊົມ, ມອບສັນຕິສຸກ, ຫລື ເຂົ້າໃຈປັນຍາ ຊຶ່ງມີຢູ່ໃນແຕ່ລະປະໂຫຍກ ຊຶ່ງໄດ້ມອບໃຫ້ໂດຍອໍານາດຂອງພຣະວິນຍານສັກສິດ! ມະນຸດອາດຈະຫລອກລວງເພື່ອນມະນຸດຂອງເຂົາໄດ້, ການຫລອກລວງອາດຈະຕິດຕາມມາດ້ວຍການຫລອກລວງ, ແລະ ລູກຫລານຂອງຄົນຊົ່ວຄົນນັ້ນອາດມີອໍານາດທີ່ຈະຊັກຊວນຄົນໂງ່ ແລະ ຄົນທີ່ຂາດການສຶກສາ, ຈົນກະທັ້ງບໍ່ມີສິ່ງໃດນອກຈາກນິຍາຍມາບອກເລົ່າໃຫ້ຄົນຢ່າງຫລວງຫລາຍຟັງ, ແລະ ຜົນຂອງຄວາມເທັດພາຄົນຢ່າງຫລວງຫລາຍໄປຕາມກະແສຂອງມັນຈົນເຖິງຫລຸມສົບ; ແຕ່ສໍາຜັດເທື່ອດຽວດ້ວຍນິ້ວພຣະຫັດຂອງພຣະອົງ, ແມ່ນແລ້ວ, ລໍາແສງໜຶ່ງດຽວຂອງລັດສະໝີພາບຈາກໂລກເບື້ອງເທິງ, ຫລື ພຣະຄໍາຄໍາດຽວຈາກພຣະໂອດຂອງພຣະຜູ້ຊ່ວຍໃຫ້ລອດ, ຈາກອ້ອມເອິກຂອງຊົ່ວນິລັນດອນ, ຈະລົດທຸກຢ່າງໃຫ້ໄປສູ່ຄວາມບໍ່ສໍາຄັນ, ແລະ ລຶບມັນຈາກຄວາມຄິດຕະຫລອດການ. ຄວາມໝັ້ນໃຈທີ່ວ່າພວກເຮົາໄດ້ຢູ່ກັບທູດອົງໜຶ່ງ, ຄວາມແນ່ນອນໃຈທີ່ວ່າພວກເຮົາໄດ້ຍິນສຸລະສຽງຂອງພຣະເຢຊູ, ແລະ ຄວາມຈິງທີ່ບໍ່ດ່າງພ້ອຍໃນຂະນະທີ່ມັນໄຫລອອກມາຈາກຜູ້ບໍລິສຸດຄົນໜຶ່ງ, ໄດ້ຮັບຄໍາສັ່ງຈາກພຣະປະສົງຂອງພຣະເຈົ້າ, ສໍາລັບຂ້າພະເຈົ້າແລ້ວແມ່ນເກີນກວ່າຈະພັນລະນາໄດ້, ແລະ ຂ້າພະເຈົ້າຈະເບິ່ງການສະແດງອອກເຖິງພຣະກະລຸນາທິຄຸນຂອງພຣະຜູ້ຊ່ວຍໃຫ້ລອດດ້ວຍຄວາມປະຫລາດໃຈ ແລະ ຄວາມຂອບພຣະໄທສະເໝີໃນຂະນະທີ່ຂ້າພະເຈົ້າໄດ້ຮັບອະນຸຍາດໃຫ້ຍັງຢູ່; ແລະ ໃນປາສາດເຫລົ່ານັ້ນ ບ່ອນທີ່ຄວາມດີພ້ອມດໍາລົງຢູ່ ແລະ ບາບບໍ່ມີວັນມາເຖິງ, ຂ້າພະເຈົ້າຫວັງທີ່ຈະບູຊາໃນວັນນັ້ນຊຶ່ງຈະບໍ່ມີວັນຢຸດຢ່ອນ."—*Messenger and Advocate,* vol. 1 (October 1834), pp. 14–16.

# ຫລັກແຫ່ງຄວາມເຊື່ອ

## ຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

1 ພວກເຮົາ [ກ]ເຊື່ອໃນ [ຂ]ພຣະເຈົ້າ, ພຣະ
ບິດາຜູ້ສະຖິດນິລັນດອນ, ແລະ ໃນ [ຄ]ພຣະ
ບຸດຂອງພຣະ ອົງ, ພຣະເຢຊູຄຣິດ, ແລະ
ໃນ [ງ]ພຣະວິນຍານບໍລິສຸດ.
2 ພວກເຮົາ ເຊື່ອວ່າ ມະນຸດຈະ ໄດ້ຮັບ
ໂທດເພາະບາບ [ກ]ຂອງຕົນ ແລະ ບໍ່ແມ່ນ
ເພາະການລ່ວງລະເມີດ [ຂ]ຂອງອາດາມ.
3 ພວກເຮົາເຊື່ອວ່າ ຜ່ານທາງ [ກ]ການຊົດ
ໃຊ້ຂອງພຣະຄຣິດ ມະນຸດຊາດທັງປວງ
ຈະ [ຂ]ລອດໄດ້ ໂດຍ [ຄ]ການປະຕິບັດຕາມ
[ງ]ກົດ ແລະ ພິທີການແຫ່ງ [ຈ]ພຣະກິດຕິຄຸນ.
4 ພວກເຮົາເຊື່ອວ່າ ຫລັກທຳ ແລະ [ກ]ພິ
ທີການເບື້ອງຕົ້ນແຫ່ງພຣະກິດຕິຄຸນຄື: ໜຶ່ງ
[ຂ]ສັດທາໃນອົງພຣະເຢຊູຄຣິດເຈົ້າ; ສອງ
[ຄ]ການກັບໃຈ; ສາມ [ງ]ບັບຕິສະມາໂດຍ
[ຈ]ການລົງໄປໃນນ້ຳໝົດທັງຕົວເພື່ອການ
ປົດບາບ; ສີ່ ການວາງ [ສ]ມືເພື່ອຮັບ [ຊ]ຂອງ
ປະທານແຫ່ງພຣະວິນຍານບໍລິສຸດ.
5 ພວກເຮົາເຊື່ອວ່າ ມະນຸດຕ້ອງໄດ້ຮັບ
[ກ]ການເອີ້ນຈາກພຣະເຈົ້າໂດຍ [ຂ]ການພະ
ຍາກອນ ແລະ ໂດຍ [ຄ]ການວາງມືໂດຍຜູ້ມີ
[ງ]ສິດອຳນາດ ເພື່ອໃຫ້ [ຈ]ສັ່ງສອນພຣະກິດຕິ
ຄຸນ ແລະ ປະຕິບັດ [ສ]ພິທີການຕາມນັ້ນ.
6 ພວກເຮົາເຊື່ອໃນ [ກ]ການຈັດວາງ
ລະບຽບງານຢ່າງດຽວກັນກັບທີ່ມີຢູ່ໃນສາດ
ສະໜາຈັກສະໄໝບູຮານ ນັ້ນຄື [ຂ]ອັກຄະ
ສາວົກ, [ຄ]ສາດສະດາ, [ງ]ສິດຍາພິບານ, ຄູ
ສອນ, [ຈ]ຜູ້ປະກາດຂ່າວປະເສີດ, ແລະ ອື່ນໆ.
7 ພວກເຮົາເຊື່ອໃນ [ກ]ຂອງປະທານແຫ່ງ
[ຂ]ການເວົ້າພາສາ, [ຄ]ການພະຍາກອນ,

---

**1** 1 *ກ* ຄມພ ເຊື່ອ, ຄວາມເຊື່ອ.
*ຂ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບິດາ.
*ຄ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະບຸດ; ພຣະເຢຊູຄຣິດ.
*ງ* ຄມພ ພຣະເຈົ້າ, ຝ່າຍພຣະເຈົ້າ—ພຣະເຈົ້າອົງເປັນພຣະວິນຍານບໍລິສຸດ; ພຣະວິນຍານບໍລິສຸດ.
2 *ກ* ພບຍ 24:16; ອຊກ 18:19–20. ຄມພ ອຳເພີໃຈ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.
*ຂ* ຄມພ ການຕົກຂອງອາດາມ ແລະ ເອວາ.
3 *ກ* ຄມພ ຊົດໃຊ້, ການຊົດໃຊ້.
*ຂ* ມຊຢ 27:24–26; ມຊ 5:9. ຄມພ ລອດ, ຄວາມລອດ.
*ຄ* ຄມພ ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.
*ງ* ຄມພ ກົດ.
*ຈ* ຄມພ ພຣະກິດຕິຄຸນ.
4 *ກ* ຄມພ ພິທີການ.
*ຂ* ຄມພ ສັດທາ.
*ຄ* ຄມພ ກັບໃຈ, ການກັບໃຈ.
*ງ* ຄມພ ບັບຕິສະມາ, ໃຫ້ບັບຕິສະມາ.
*ຈ* ຄມພ ປົດບາບ, ການປົດບາບ.
*ສ* ຄມພ ມື, ການວາງ.
*ຊ* ຄມພ ຂອງປະທານແຫ່ງພຣະວິນຍານບໍລິສຸດ.
5 *ກ* ຄມພ ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.
*ຂ* ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.
*ຄ* ຄມພ ມື, ການວາງ.
*ງ* ຄມພ ສິດອຳນາດ; ຖານະປະໂລຫິດ.
*ຈ* ຄມພ ສັ່ງສອນ.
*ສ* ແອວ 13:8–16.
6 *ກ* ຄມພ ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ—ການຈັດຕັ້ງສາດສະໜາຈັກ.
*ຂ* ຄມພ ອັກຄະສາວົກ.
*ຄ* ຄມພ ສາດສະດາ.
*ງ* ຄມພ ອະທິການ.
*ຈ* ຄມພ ປິຕຸ, ແຫ່ງປິຕຸ; ຜູ້ປະກາດຂ່າວ.
7 *ກ* ຄມພ ຂອງປະທານແຫ່ງພຣະວິນຍານ.
*ຂ* ຄມພ ການເວົ້າພາສາ, ຂອງປະທານແຫ່ງ.
*ຄ* ຄມພ ທຳນາຍ, ການທຳນາຍ, ຄຳທຳນາຍ.

[ງ]ການເປີດເຜີຍ, [ຈ]ພາບທີ່ມາໃຫ້ເຫັນ, [ສ]ການປິ່ນປົວ, [ຊ]ການແປພາສາ, ແລະ ອື່ນໆ.

8 ພວກເຮົາເຊື່ອວ່າ [ກ]ພຣະຄຣິສຕະທຳຄຳພີເປັນ [ຂ]ພຣະຄຳຂອງພຣະເຈົ້າຕາບໃດທີ່ແປມັນ [ຄ]ຖືກຕ້ອງ. ພວກເຮົາເຊື່ອອີກວ່າ [ງ]ພຣະຄຳພີມໍມອນເປັນພຣະຄຳຂອງພຣະເຈົ້າ.

9 ພວກ ເຮົາ ເຊື່ອ ທັງ ໝົດ ທີ່ ພຣະ ເຈົ້າ ໄດ້ [ກ]ເປີດເຜີຍມາ, ທັງໝົດທີ່ພຣະອົງເປີດເຜີຍຢູ່ໃນຂະນະນີ້ ແລະ ພວກເຮົາເຊື່ອວ່າພຣະອົງຈະ [ຂ]ເປີດເຜີຍເລື່ອງສຳຄັນ ແລະ ຍິ່ງໃຫຍ່ອີກຫລາຍເລື່ອງກ່ຽວກັບອານາຈັກຂອງພຣະເຈົ້າ.

10 ພວກ ເຮົາ ເຊື່ອ ໃນ [ກ]ການ ຮ່ວມ ກັນແທ້ໆ ຂອງ ເຊື້ອສາຍອິດສະຣາເອນ ແລະໃນ ກ າ ນ ກັບ ຄືນ ມາ ຂອງ ຄົນ [ຂ]ສິບ ເຜົ່າແລະ ວ່າ [ຄ]ຊີໂອນ (ເຢຣູຊາເລັມໃໝ່) ຈະຖືກສ້າງຂຶ້ນໃນທະວີບອາເມຣິກາ ວ່າພຣະຄຣິດ ຈະ [ງ]ປົກ ຄອງ ແຜ່ນ ດິນ ໂລກ ເອງແລະ ວ່າແຜ່ນດິນໂລກຈະຖືກ [ຈ]ເຮັດໃໝ່ແລະ ໄດ້ຮັບ [ສ]ລັດສະໝີພາບ [ຊ]ແຫ່ງສຸຂະເສີມຂອງມັນ.

11 ພວກ ເຮົາ ເຊື່ອ ຖື [ກ]ສິດ ທິ ແຫ່ງ ການນະມັດສະການພຣະເຈົ້າ ຜູ້ມີລິດທານຸພາບຕາມ [ຂ]ການ ບ ອ ກ ຂ ອ ງ [ຄ]ຄວາມຮູ້ສຶກຜິດຫລື ຖືກຂອງເຮົາເອງ ແລະ ຍອມໃຫ້ຄົນທັງປວງມີສິດທິເຊັ່ນດຽວກັນ ໃຫ້ເຂົາ [ງ]ນະມັດສະການຢ່າງໃດ, ທີ່ໃດ, ຫລື ສິ່ງໃດທີ່ເຂົາຈະນະມັດສະການ.

12 ພວກ ເຮົາ ເຊື່ອ ໃນ ການ ຂຶ້ນ ຢູ່ ກັບກະສັດ, ປະທານາທິບໍດີ, ຜູ້ປົກຄອງ, ແລະຜູ້ພິພາກສາ ໃນການເຮັດຕາມການຍົກຍ້ອງ ແລະ ໃນການສະໜັບສະໜູນ [ກ]ກົດໝາຍ.

13 ພວກເຮົາເຊື່ອໃນການ ເປັນຄົນ [ກ]ຊື່ສັດ, ຈິງໃຈ, [ຂ]ບໍລິສຸດ, ມີເມດຕາ, ມີຄຸນນະທຳ, ແລະ ໃນ [ຄ]ການເຮັດຄວາມດີຕໍ່ມະນຸດທັງປວງ ໂດຍແທ້ແລ້ວ ພວກເຮົາຈະກ່າວວ່າ ພວກເຮົາດຳເນີນຕາມ [ງ]ຄຳແນະນຳຂອງໂປໂລ—ນັ້ນຄື ພວກເຮົາເຊື່ອທຸກສິ່ງ,

---

7 ງ ຄມພ ເປີດເຜີຍ, ການເປີດເຜີຍ.
ຈ ຄມພ ພາບນິມິດ.
ສ ຄມພ ປິ່ນປົວ, ການປິ່ນປົວ.
ຊ 1 ກຣທ 12:10; ມມ 9:7–8.
8 ກ ຄມພ ພຣະຄຣິສ ຕະທຳຄຳພີ.
ຂ ຄມພ ພຣະຄຳ ຂອງພຣະເຈົ້າ.
ຄ 1 ນຟ 13:20–40; 14:20–26.
ງ ຄມພ ພຣະຄຳພີມໍມອນ.
9 ກ ຄມພ ເປີດເຜີຍ, ການເປີດເຜີຍ.
ຂ ອມ 3:7; ຄພ 121:26–33. ຄມພ ພຣະຄຳພີ—ພຣະຄຳພີທີ່ໄດ້ທຳນາຍໄວ້ຈະອອກມາ.
10 ກ ອຊຢ 49:20–22; 60:4; 1 ນຟ 19:16–17. ຄມພ ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ.
ຂ ຄມພ ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ.
ຄ ອທ 13:2–11; ຄພ 45:66–67; 84:2–5; ມຊ 7:18. ຄມພ ຊີໂອນ; ເຢຣູຊາເລັມໃໝ່.
ງ ຄມພ ພັນປີ.
ຈ ຄມພ ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ.
ສ ຄມພ ລັດສະໝີພາບ.
ຊ ອສ ສະພາບແບບສວນເອເດນ; ອຊຢ 11:6–9; 35; 51:1–3; 65:17–25; ອຊກ 36:35. ຄມພ ທີ່ສຸຂະເສີມ.
11 ກ ຄພ 134:1–11.
ຂ ຄມພ ອຳເພີໃຈ.
ຄ ຄມພ ສຳນຶກ, ຄວາມສຳນຶກ.
ງ ຄມພ ນະມັດສະການ.
12 ກ ຄພ 58:21–23. ຄມພ ກົດ.
13 ກ ຄມພ ຊື່ສັດ, ຄວາມຊື່ສັດ.
ຂ ຄມພ ພົມມະຈັນ.
ຄ ຄມພ ຮັບໃຊ້, ການຮັບໃຊ້.
ງ ຟລປ 4:8.

ພວກເຮົາ ຈຫວັງທຸກສິ່ງ, ພວກເຮົາອົດທົນ
ມາແລ້ວຫລາຍສິ່ງ ແລະ ຫວັງທີ່ຈະສາມາດ
ສອົດທົນ ໄດ້ທຸກສິ່ງ ຫາກມີສິ່ງໃດທີ່ເປັນ
ຂຄຸນນະທຳ, ງົດງາມ, ຫລື ຈາກການລາຍ
ງານດີ ຫລື ຄວນສັນລະເສີນ, ພວກເຮົາ
ສະແຫວງຫາສິ່ງເຫລົ່ານີ້.

ໂຈເຊັບ ສະມິດ.

13 ຈ ຄມພ ຫວັງ, ຄວາມຫວັງ.
ສ ຄມພ ອົດທົນ,
ຄວາມອົດທົນ.
ຂ ຄມພ ຄຸນນະທຳ;
ຮຽບຮ້ອຍ,
ຄວາມຮຽບຮ້ອຍ.

# ພາກທ້ອຍທ້າຍ

ຄູ່ມືພຣະຄຳພີ

ລຳດັບປະຫວັດສາດ

ຄວາມກົມກຽວຂອງພຣະກິດຕິຄຸນ

ການແປຂອງໂຈເຊັບ ສະມິດ

ແຜນທີ່ຂອງສະໄໝພຣະຄຣິສຕະທຳຄຳພີ

ຮູບພາບຂອງສະໄໝພຣະຄຣິສຕະທຳຄຳພີ

ແຜນທີ່ປະຫວັດສາດຂອງສາດສະໜາຈັກ

ຮູບພາບປະຫວັດສາດຂອງສາດສະໜາຈັກ

# ຄູ່ມືພຣະຄຳພີ

ຄູ່ມືພຣະຄຳພີໃຫ້ຄຳອະທິບາຍກ່ຽວກັບຄຳສອນ, ຫລັກທຳ, ຜູ້ຄົນ, ແລະ ສະຖານທີ່ ຊຶ່ງໄດ້ຖືກຄັດເລືອກມາຈາກພຣະຄຣິສຕະທຳຄຳພີທີ່ສັກສິດ, ພຣະຄຳພີມໍມອນ, ຄຳສອນ ແລະ ພັນທະສັນຍາ, ແລະ ໄຂ່ມຸກອັນລ້ຳຄ່າ. ມັນຍັງໄດ້ຈັດຫາຂໍ້ອ້າງອີງພຣະຄຳພີທີ່ສຳຄັນໃຫ້ທ່ານ ເພື່ອສຶກສາແຕ່ລະຫົວຂໍ້ນຳອີກ. ຄູ່ມືສາມາດຊ່ວຍເຫລືອທ່ານໃນການສຶກສາພຣະຄຳພີຂອງທ່ານເປັນສ່ວນຕົວ ແລະ ເປັນຄອບຄົວ. ມັນສາມາດຊ່ວຍເຫລືອທ່ານໃນການຕອບຄຳຖາມກ່ຽວກັບພຣະກິດຕິຄຸນ, ສຶກສາຫົວຂໍ້ຕ່າງໆໃນພຣະຄຳພີ, ຕຽມຄຳປາໄສ ແລະ ບົດຮຽນ, ແລະ ເພີ່ມຄວາມຮູ້ແຈ້ງ ແລະ ປະຈັກພະຍານຂອງທ່ານໃນພຣະກິດຕິຄຸນ.

ແຜນພາບຕໍ່ໄປນີ້ອະທິບາຍຫົວຂໍ້ເປັນຕົວຢ່າງໃນຄູ່ມືພຣະຄຳພີ

ຫົວຂໍ້ເປັນອັກສອນຕົວໜາ.

**ແຜ່ນດິນໂລກ.** *ເບິ່ງ* ສ້າງ, ການສ້າງ; ໂລກ *ນຳອີກ*

ບາງເທື່ອຫົວຂໍ້ອື່ນໆຢູ່ໃນຄູ່ມືມີຂໍ້ມູນທີ່ກ່ຽວຂ້ອງກັບຫົວຂໍ້ທີ່ທ່ານກຳລັງສຶກສາ. ຄຳວ່າ *ເບິ່ງ . . . ນຳອີກ* ທີ່ເປັນຕົວເນີ້ງ ຈະພາທ່ານໄປຫາຫົວຂໍ້ທີ່ກ່ຽວຂ້ອງເຫລົ່ານັ້ນ.

ຫົວຂໍ້ຮ່ວມດ້ວຍຄວາມໝາຍສັ້ນໆ

ດາວພະເຄາະທີ່ເຮົາອາໄສຢູ່, ໄດ້ຖືກສ້າງຂຶ້ນໂດຍພຣະເຈົ້າຜ່ານພຣະເຢຊູຄຣິດ ເພື່ອໃຫ້ມະນຸດໃຊ້ໃນຊ່ວງຢູ່ໃນການທົດລອງທີ່ເປັນມະຕະ. ຈຸດໝາຍປາຍທາງຂອງມັນແມ່ນເພື່ອຈະໄດ້ຮຸ່ງເຫລື້ອມ ແລະ ສູງສົ່ງ (ຄພ 77:1–2; 130:8–9). ແຜ່ນດິນໂລກຈະກາຍເປັນມູນມໍລະດົກນິລັນດອນຂອງຜູ້ທີ່ດຳລົງຊີວິດຢ່າງມີຄ່າຄວນຕໍ່ລັດສະໝີພາບຊັ້ນສູງ (ຄພ 88:14–26). ເຂົາເຈົ້າຈະຊື່ນຊົມກັບທີ່ປະທັບຂອງພຣະບິດາ ແລະ ພຣະບຸດ (ຄພ 76:62).

ຂໍ້ອ້າງອີງພຣະຄຳພີທີ່ຊ່ວຍທ່ານໃຫ້ເຂົ້າໃຈຄວາມໝາຍທີ່ຢູ່ໃນວົງເລັບ.

ບາງຫົວຂໍ້ຈະມີຫົວຂໍ້ຫຍ່ອຍ. ຫົວຂໍ້ເຫລົ່ານີ້ເປັນຕົວເນີ້ງ.

*ໄດ້ຖືກສ້າງຂຶ້ນສຳລັບມະນຸດ*: ພຣະເຈົ້າໄດ້ມອບໃຫ້ມະນຸດຄອບຄອງທຸກສິ່ງເທິງແຜ່ນດິນໂລກ, **ປຖກ** 1:28 (ມຊ 2:28). ແຜ່ນດິນໂລກນີ້ເປັນຂອງພຣະຜູ້ເປັນເຈົ້າ, **ອພຍ** 9:29 (ພສສ 24:1). ພຣະຜູ້ເປັນເຈົ້າໄດ້ປະທານແຜ່ນດິນໂລກນີ້ໃຫ້ແກ່ມະນຸດ, **ພສສ** 115:16. ແມ່ນເຮົາທີ່ໄດ້ນິລະມິດສ້າງໂລກນີ້ຂຶ້ນມາ ແລະ ໄດ້ສ້າງມະນຸດທຸກຄົນໃຫ້ອາໄສຢູ່ໃນທີ່ນັ້ນ, **ອຊຢ** 45:12.

ໂດຍອຳນາດແຫ່ງພຣະຄຳຂອງພຣະອົງ ມະນຸດຈຶ່ງໄດ້ມາສູ່ແຜ່ນດິນໂລກ, **ຢຄ** 4:9.

ຂໍ້ອ້າງອີງພຣະຄຳພີແຕ່ລະຂໍ້ຈະຢູ່ຂ້າງຫລັງຂໍ້ຄວາມສັ້ນໆທີ່ຍົກມາຈາກພຣະຄຳພີ ຫລື ຂໍ້ຄວາມສະຫລຸບຂອງພຣະຄຳພີ.

ແຜ່ນດິນໂລກຈະຖືກມອບໃຫ້ຜູ້ຄົນທີ່ຮັບເອົາພຣະວິນຍານສັກສິດເພື່ອການນຳພາຂອງເຂົາເຈົ້າ, **ຄພ** 45:56–58 (ຄພ 103:7). ຜູ້ທີ່ເຊື່ອຟັງຕໍ່ພຣະກິດຕິຄຸນຈະໄດ້ຮັບສິ່ງທີ່ດີຂອງແຜ່ນດິນໂລກເປັນລາງວັນ, **ຄພ** 59:3. ຄົນຈົນ ແລະ ຄົນອ່ອນໂຍນຂອງແຜ່ນດິນໂລກຈະໄດ້ຮັບມັນເປັນມູນມໍລະດົກ, **ຄພ** 88:17 (ມທ 5:5; 3 ນຟ 12:5).

ຂໍ້ອ້າງອີງພຣະຄຳພີທີ່ກ່ຽວຂ້ອງຈະຢູ່ໃນວົງເລັບ.

ພວກເຮົາຈະສ້າງແຜ່ນດິນໂລກ, ແລະ ພວກເຮົາຈະພິສູດມັນ, **ອຣຮ** 3:24–25.

ບາງເທື່ອຂໍ້ມູນກ່ຽວກັບເລື່ອງໃດເລື່ອງໜຶ່ງຈະບໍ່ຢູ່ໃນຫົວຂໍ້ທີ່ທ່ານຄົ້ນຫາ. ຄຳວ່າ *ເບິ່ງ* ທີ່ເປັນຕົວເນີ້ງຈະພາທ່ານໄປຫາຫົວຂໍ້ທີ່ມີຂໍ້ມູນດັ່ງກ່າວ.

**ອີດສະເຕີ.** *ເບິ່ງ* ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ພຣະເຢຊູຄຣິດ

**ທີ່ສຸດຂອງແຜ່ນດິນໂລກ.** *ເບິ່ງ* ໂລກ—ທີ່ສຸດຂອງໂລກ

ຄຳວ່າ *ເບິ່ງ* ທີ່ເປັນຕົວເນີ້ງ (ຫລື *ເບິ່ງ . . . ນຳອີກ)* ຕິດຕາມດ້ວຍເຄື່ອງໝາຍຂີດຈະບອກທ່ານວ່າ ຂໍ້ມູນນັ້ນຢູ່ໃນຫົວຂໍ້ຫຍ່ອຍ ("ທີ່ສຸດຂອງໂລກ") ຂອງຫົວຂໍ້ໃຫຍ່ ("ໂລກ").

**ກະສັດ**

ໜັງສືສອງເຫລັ້ມໃນພຣະຄຳພີເດີມ. ໜັງສືທັງສອງເຫລັ້ມນີ້ເລົ່າປະຫວັດສາດຂອງຊາວອິດສະຣາເອນນັບຈາກການກະບົດຂອງອາໂດນີຢາ, ລູກຊາຍຄົນທີສີ່ຂອງກະສັດດາວິດ (ປະມານ 1015 ປີ ກ່ອນ ຄ.ສ.), ເຖິງຕອນການຈັບໄປເປັນຊະເລີຍເທື່ອສຸດທ້າຍຂອງຢູດາ (ປະມານ 586 ປີ ກ່ອນ ຄ.ສ.). ໜັງສືທັງສອງບັນຈຸປະຫວັດສາດທັງໝົດຂອງອານາຈັກພາກເໜືອ (ສິບເຜົ່າຂອງອິດສະຣາເອນ) ນັບແຕ່ຕອນແຍກອອກຈາກກັນຈົນເຖິງຊາວອັດຊີເຣຍໄດ້ເອົາພວກເຂົາໄປເປັນຊະເລີຍຢູ່ປະເທດທາງພາກເໜືອ. ເບິ່ງ ລຳດັບປະຫວັດສາດ ໃນພາກທ້ອຍທ້າຍ ນຳອີກ.

*ກະສັດທີໜຶ່ງ:* ບົດທີ 1 ບັນຍາຍວັນເວລາສຸດທ້າຍຂອງຊີວິດຂອງກະສັດດາວິດ. ບົດທີ 2–11 ບັນທຶກກ່ຽວກັບຊີວິດຂອງໂຊໂລໂມນ. ບົດທີ 12–16 ບອກເຖິງຜູ້ຂຶ້ນແທນໂຊໂລໂມນ, ເຣໂຮໂບອາມ ແລະ ເຢໂຣໂບອາມ. ເຢໂຣໂບອາມເປັນຜູ້ເຮັດໃຫ້ເກີດການແບ່ງແຍກອານາຈັກຂອງອິດສະຣາເອນ. ກະສັດອົງອື່ນໆກໍໄດ້ຖືກກ່າວເຖິງ. ບົດທີ 17–21 ບັນທຶກພາກສ່ວນໜຶ່ງຂອງການປະຕິບັດສາດສະໜາກິດຂອງເອລີຢາ ຕອນເພິ່ນໄດ້ຕັກເຕືອນອາຮາບ, ກະສັດຂອງອິດສະຣາເອນ. ບົດທີ 22 ບັນທຶກສົງຄາມກັບຊີເຣຍ ຊຶ່ງໃນສົງຄາມນີ້ ອາຮາບ ແລະ ເຢໂຮຊາຟັດ, ກະສັດຂອງຢູດາ, ໄດ້ລວມກຳລັງເຂົ້າກັນ. ສາດສະດາມີກາອີຢາໄດ້ທຳນາຍຕໍ່ຕ້ານກະສັດ.

*ກະສັດທີສອງ:* ບົດທີ 1:1–2:11 ເລົ່າຊີວິດຂອງເອລີຢາຕໍ່, ລວມທັງການຂຶ້ນໄປສະຫວັນຂອງເອລີຢາໃນລົດມ້າທີ່ເປັນໄຟ. ບົດທີ 2–9 ກ່າວເຖິງການປະຕິບັດສາດສະໜາກິດດ້ວຍສັດທາ ແລະ ອຳນາດອັນຍິ່ງໃຫຍ່ຂອງເອລີຊາ. ບົດທີ 10 ບອກກ່ຽວກັບເຢຮູ, ກະສັດ, ແລະ ເຖິງວິທີທີ່ເພິ່ນໄດ້ທຳລາຍຄອບຄົວຂອງອາຮາບ ແລະ ປະໂລຫິດຂອງພຣະບາອານ. ບົດທີ 11–13 ບັນທຶກການປົກຄອງທີ່ຊອບທຳຂອງໂຢອາດ ແລະ ການຕາຍ ຂອງເອລີຊາ. ບົດທີ 14–17 ບອກເຖິງກະສັດອົງຕ່າງໆຜູ້ໄດ້ປົກຄອງໃນອິດສະຣາເອນ ແລະ ຢູດາ, ສ່ວນຫລາຍໃນຄວາມຊົ່ວຮ້າຍ. ບົດທີ 15 ບັນທຶກການທີ່ອັດຊີເຣຍຍຶດຄອງສິບສອງເຜົ່າຂອງອິດສະຣາເອນ. ບົດທີ 18–20 ບັນທຶກເຖິງຊີວິດທີ່ຊອບທຳຂອງເຮເຊກີຢາ, ກະສັດຂອງຢູດາ, ແລະ ສາດສະດາເອຊາຢາ. ບົດທີ 21–23 ບອກກ່ຽວກັບກະສັດມານາເຊ ແລະ ໂຢຊີຢາ. ຕາມທີ່ບອກເລົ່າກັນມາ, ມານາເຊ ເປັນຜູ້ຮັບຜິດຊອບຕໍ່ການຕາຍຍ້ອນຄວາມເຊື່ອຂອງເອຊາຢາ. ໂຢຊີຢາໄດ້ເປັນກະສັດທີ່ຊອບທຳຜູ້ໄດ້ສະຖາປະນາກົດໝາຍຄືນໃໝ່ໃນບັນດາຊາວຢິວ. ບົດທີ 24–25 ບັນທຶກການຈັບໄປເປັນຊະເລີຍຂອງຊາວບາບີໂລນ.

**ກະຕັນຍູ, ຄວາມກະຕັນຍູ.** *ເບິ່ງ* ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ

**ກະບົດ, ການກະບົດ.** *ເບິ່ງ* ຈົ່ມ; ບາບ; ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ; ມານ *ນຳອີກ*

ການທ້າທາຍ ຫລື ການຕໍ່ຕ້ານພຣະຜູ້ເປັນເຈົ້າ, ລວມທັງການປະຕິເສດທີ່ຈະຕິດຕາມຜູ້ນຳທີ່ພຣະອົງໄດ້ເລືອກໄວ້ ແລະ ຕັ້ງໃຈທີ່ຈະບໍ່ເຊື່ອຟັງພຣະບັນຍັດຂອງພຣະອົງ.

ຢ່າກະບົດຕໍ່ສູ້ພຣະຜູ້ເປັນເຈົ້າ, **ຈບຊ** 14:9. ຄົນຊົ່ວຮ້າຍຫາເຫດແຕ່ທຳລາຍ, **ສພສ** 17:11. ເຄາະກຳເປັນຂອງລູກຫລານທີ່ກະບົດ, **ອຊຢ** 30:1.

ພຣະຜູ້ເປັນເຈົ້າຈະບໍ່ໄຖ່ຜູ້ໃດທີ່ກະບົດຕໍ່ພຣະອົງ ແລະ ຕາຍໄປໃນບາບຂອງພວກເຂົາ, **ມຊຢ** 15:26. ຊາວອາມລິໄຊໄດ້ອອກມາກະບົດຕໍ່ພຣະເຈົ້າຢ່າງເປີດເຜີຍ, **ແອວ** 3:18–19.

ຄົນກະບົດຈະຖືກສຽບແທງດ້ວຍຄວາມໂສກເສົ້າຢ່າງຫລວງຫລາຍ, **ຄພ** 1:3. ພຣະພິໂລດຂອງພຣະຜູ້ເປັນເຈົ້າ ໄດ້ເກີດກັບຄົນກະບົດ, **ຄພ** 56:1 (ຄພ 63:1–6).

ຊາຕານໄດ້ກະບົດຕໍ່ພຣະເຈົ້າ, **ມຊ** 4:3.

**ກັບໃຈ, ການກັບໃຈ.** *ເບິ່ງ* ສາລະພາບ, ການສາລະພາບ; ຊົດໃຊ້, ການຊົດໃຊ້; ປົດ

ບາບ, ການປົດບາບ; ພຣະເຢຊູຄຣິດ; ຫົວໃຈທີ່ຊອກຊ້ຳ; ອະໄພ, ໃຫ້ອະໄພ *ນຳອີກ*

ການປ່ຽນຄວາມຄິດ ແລະ ຈິດໃຈ ທີ່ສ້າງຄວາມນຶກ ຄິດທີ່ສົດຊື່ນຕໍ່ພຣະເຈົ້າ, ຕໍ່ຕົນເອງ, ແລະ ຕໍ່ຊີວິດໂດຍທົ່ວໄປ. ການກັບໃຈໝາຍຄວາມວ່າ ບຸກຄົນໄດ້ຫັນໜີຈາກຄວາມຊົ່ວ ແລະ ຫັນໃຈ ແລະ ຄວາມປະສົງຂອງຕົນໄປຫາພຣະເຈົ້າ, ຍອມຕົນຕໍ່ພຣະບັນຍັດຂອງພຣະເຈົ້າ ແລະ ປາດຖະໜາ ແລະ ປະຖິ້ມບາບ. ການກັບໃຈທີ່ແທ້ຈິງ ມາຈາກການມີຄວາມຮັກຕໍ່ພຣະເຈົ້າ ແລະ ຄວາມປາດຖະໜາດ້ວຍຄວາມຈິງໃຈ ທີ່ຈະເຊື່ອຟັງພຣະບັນຍັດຂອງພຣະອົງ. ທຸກຄົນທີ່ມີຄວາມຮັບຜິດຊອບໄດ້ເຮັດບາບ ແລະ ຕ້ອງກັບໃຈ ກ່ອນຈະກ້າວໜ້າໄປສູ່ຄວາມລອດ. ພຽງແຕ່ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດເທົ່ານັ້ນ ທີ່ການກັບໃຈຂອງເຮົາ ຈະເກີດຜົນ ແລະ ຖືກຍອມຮັບໂດຍພຣະເຈົ້າ.

ໃຫ້ພວກທ່ານສາລະພາບບາບຕໍ່ພຣະຜູ້ເປັນເຈົ້າ, **ອຊຣ** 10:11. ຈົ່ງເລີກຈາກການຊົ່ວຊ້າທັງໝົດທີ່ພວກເຈົ້າກຳລັງເຮັດຢູ່ນັ້ນສາ; ຈົ່ງເລີກເຮັດຊົ່ວ, **ອຊຢ** 1:16. ຈົ່ງຫັນໜີຈາກການຊົ່ວຊ້າທັງໝົດທີ່ພວກເຈົ້າກຳລັງເຮັດນັ້ນສາ, **ອຊກ** 18:30–31.

ຈົ່ງຖິ້ມໃຈເກົ່າ ເອົາໃຈໃໝ່ເຊົາເຮັດບາບສາ ເພາະວ່າອານາຈັກສະຫວັນມາໃກ້ແລ້ວ, **ມທ** 3:2. ໃນສະຫວັນຈະມີຄວາມຊົມຊື່ນຍິນດີຫລາຍ ທີ່ຄົນບາບຜູ້ໜຶ່ງຖິ້ມໃຈເກົ່າເອົາໃຈໃໝ່, **ລກ** 15:7. ພຣະເຈົ້າສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນ ໃຫ້ຖິ້ມໃຈເກົ່າເອົາໃຈໃໝ່, **ກຈກ** 17:30 (2 ນຟ 9:23; 3 ນຟ 11:31–40; ຄພ 133:16). ຄວາມທຸກໃຈຕາມຢ່າງຊອບພຣະໄທພຣະເຈົ້ານັ້ນ ຍ່ອມເຮັດໃຫ້ກັບໃຈເສຍໃໝ່, **2 ກຣທ** 7:10.

ພຣະວິນຍານຂອງພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່ ໄດ້ເຮັດໃຫ້ມີການປ່ຽນແປງອັນໃຫຍ່ຫລວງໃນໃຈຂອງພວກເຮົາ, ຈົນວ່າພວກເຮົາບໍ່ມີໃຈທີ່ຈະກະທຳຄວາມຊົ່ວອີກຕໍ່ໄປ, **ມຊຢ** 5:2. ຖ້າຫາກເຂົາສາລະພາບບາບ ແລະ ກັບໃຈ, ແລ້ວເຈົ້າຈົ່ງໃຫ້ອະໄພແກ່ເຂົາ, **ມຊຢ** 26:29. ຫລັງຈາກການສັ່ງສອນຂອງແອວມາ, ຫລາຍຄົນໄດ້ເລີ່ມຕົ້ນກັບໃຈ, **ແອວ** 14:1. ຢ່າຜັດວັນແຫ່ງການກັບໃຈຂອງພວກທ່ານ, **ແອວ** 34:33. ແອວມາໄດ້ສິດສອນຮີລາມັນເຖິງການກັບໃຈ ແລະ ການປ່ຽນໃຈເຫລື້ອມໃສຂອງເພິ່ນ, **ແອວ** 36 (ມຊຢ 27:8–32). ການກັບໃຈຈະມາສູ່ມະນຸດບໍ່ໄດ້ຖ້າຫາກບໍ່ມີການລົງໂທດ, **ແອວ** 42:16. ໃຫ້ບາບຂອງລູກເທົ່ານັ້ນເປັນສິ່ງທີ່ກັງວົນໃຈລູກ, ດ້ວຍຄວາມກັງວົນໃຈນັ້ນ ມັນຈະນຳລູກລົງມາສູ່ການກັບໃຈ, **ແອວ** 42:29. ໃຫ້ພວກເຈົ້າຖວາຍໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດຂອງພວກເຈົ້າແກ່ເຮົາເປັນເຄື່ອງບູຊາ, **3 ນຟ** 9:20. ຄົນໃດກໍຕາມທີ່ກັບໃຈ ແລະ ມາຫາເຮົາຄືກັບເດັກນ້ອຍ, ເຮົາຈະຮັບຜູ້ນັ້ນໄວ້, **3 ນຟ** 9:22. ຈົ່ງກັບໃຈ, ເຈົ້າທັງຫລາຍເຖິງທີ່ສຸດຂອງແຜ່ນດິນໂລກ, **3 ນຟ** 27:20. ທຸກເທື່ອທີ່ເຂົາກັບໃຈ, ເຂົາກໍຈະໄດ້ຮັບການອະໄພ, **ມຣນ** 6:8.

ຢ່າກ່າວສິ່ງໃດນອກຈາກການກັບໃຈແກ່ຄົນລຸ້ນນີ້, **ຄພ** 6:9 (ຄພ 11:9). ຄວາມຊື່ນຊົມຂອງພຣະອົງນັ້ນຈະຍິ່ງໃຫຍ່ພຽງໃດນຳຈິດວິນຍານທີ່ກັບໃຈ, **ຄພ** 18:13. ມະນຸດທຸກໆຄົນຈະຕ້ອງກັບໃຈ ຖ້າບໍ່ດັ່ງນັ້ນຈະທຸກທໍລະມານ, **ຄພ** 19:4. ຄົນທີ່ເຮັດບາບ ແລະ ບໍ່ກັບໃຈຈະຖືກຂັບໄລ່ອອກໄປ, **ຄພ** 42:28. ຜູ້ທີ່ສາລະພາບ ແລະ ປະຖິ້ມບາບຂອງຕົນຈະໄດ້ຮັບການໃຫ້ອະໄພ, **ຄພ** 58:42–43. ຄົນຕາຍຜູ້ທີ່ກັບໃຈຈະຖືກໄຖ່, **ຄພ** 138:58.

ພວກເຮົາເຊື່ອໃນການກັບໃຈ, **ຫຼຊ** 1:4.

### ການຊາ

ໃນພຣະຄຳພີໃໝ່, ເປັນຕຳແໜ່ງຂອງຈັກກະພັດໂຣມທີ່ຜູ້ຄົນຮູ້ຈັກກັນດີ. ມັນຖືກໃຊ້ໃນພຣະຄຳພີເປັນ ເຄື່ອງໝາຍຂອງການປົກຄອງ ຫລື ອຳນາດທາງໂລກ.

ສິ່ງທີ່ເປັນຂອງການຊາຈົ່ງຄືນໃຫ້ແກ່ການຊາ, **ມທ** 22:21 (ມຣກ 12:17; ລກ 20:25; ຄພ 63:26).

**ກາດ, ລູກຊາຍຂອງຢາໂຄບ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງຢາໂຄບ ກັບສີລະປາ (ປຖກ 30:10–11). ຜູ້ສືບຕະກຸນຂອງເພິ່ນ ໄດ້ກາຍເປັນເຜົ່າໜຶ່ງຂອງອິດສະຣາເອນ.

*ເຜົ່າຂອງກາດ:* ສຳລັບພອນຂອງຢາໂຄບທີ່ມອບໃຫ້ແກ່ເຜົ່າຂອງກາດ, ໃຫ້ເບິ່ງ ປະຖົມມະການ 49:19. ສຳລັບພອນຂອງໂມເຊທີ່ມອບໃຫ້ແກ່ເຜົ່າຂອງກາດ, ໃຫ້ເບິ່ງ ພຣະບັນຍັດສອງ 33:20–21. ອີງຕາມພອນເຫລົ່ານີ້, ຜູ້ສືບຕະກຸນຂອງກາດຕ້ອງເປັນນັກຮົບ. ແຜ່ນດິນທີ່ຖືກມອບໃຫ້ເຂົາເຈົ້າຢູ່ໃນແຜ່ນດິນຂອງການາອານ ແມ່ນຢູ່ເບື້ອງຕາເວັນອອກຂອງແມ່ນ້ຳຈໍແດນ ແລະ ເປັນພື້ນທີ່ ທີ່ດີ ຊຶ່ງມີນ້ຳຢ່າງຫລວງຫລາຍ.

**ກາດຜູ້ພະຍາກອນ.** *ເບິ່ງ* ພຣະຄຳພີ—ພຣະຄຳພີທີ່ສູນເສຍໄປ *ນຳອີກ*

ສາດສະດາຄົນໜຶ່ງ ແລະ ເປັນເພື່ອນທີ່ຊື່ສັດ ແລະ ເປັນຜູ້ໃຫ້ຄຳແນະນຳແກ່ດາວິດໃນສະໄໝພຣະຄຳພີເດີມ (1 ຊມອ 22:5; 2 ຊມອ 24:11–19). ເພິ່ນໄດ້ຂຽນໜັງສືເຫລັ້ມໜຶ່ງເຖິງການກະທຳຂອງດາວິດ, ຊຶ່ງກາຍເປັນພຣະຄຳພີທີ່ໄດ້ສູນເສຍໄປແລ້ວ (1 ຂຄ 29:29).

**ການາອານ, ຊາວການາອານ**

ໃນສະໄໝຂອງພຣະຄຳພີເດີມ, ລູກຊາຍຄົນທີສີ່ຂອງຮາມ (ປຖກ 9:22; 10:1, 6) ແລະ ຫລານຊາຍຂອງໂນອາ. ຊາວການາອານໝາຍເຖິງຄົນຈາກແຜ່ນດິນບ່ອນທີ່ການາອານໄດ້ອາໄສຢູ່ມາແຕ່ດັ້ງເດີມ ແລະ ໝາຍເຖິງລູກຫລານຂອງລາວນຳອີກ. ຊາວການາອານກໍເປັນຊື່ໜຶ່ງຂອງຜູ້ຄົນທີ່ອາໄສຢູ່ບ່ອນລຸ່ມຕາມຝັ່ງແມ່ນ້ຳເມດີແຕຣາເນຂອງຟີລິດສະຕິນນຳອີກ. ບາງເທື່ອຊື່ນີ້ຖືກໃຊ້ເພື່ອອະທິບາຍເຖິງຜູ້ອາໄສທັງໝົດທີ່ບໍ່ໄດ້ເປັນຊາວອິດສະຣາເອນຂອງປະເທດທາງຕາເວັນຕົກຂອງຈໍແດນ, ຊຶ່ງຊາວກຣີກເອີ້ນວ່າ ໂປນີເຊຍ.

**ການກຳນົດໄວ້ລ່ວງໜ້າ.** *ເບິ່ງ* ແຕ່ງຕັ້ງລ່ວງໜ້າ, ການແຕ່ງຕັ້ງລ່ວງໜ້າ

**ການຂາດສິນທຳ.** *ເບິ່ງ* ການຂາດສິນທຳທາງເພດ; ຊົ່ວຮ້າຍ, ຄວາມຊົ່ວຮ້າຍ; ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ພົມມະຈັນ

**ການຂາດສິນທຳທາງເພດ.** *ເບິ່ງ* ການລ່ວງປະເວນີ; ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ຫລິ້ນຊູ້ *ນຳອີກ*

ການຫລິ້ນຊູ້ດ້ວຍຄວາມເຕັມໃຈ, ການລ່ວງປະເວນີ, ການຮ່ວມເພດກັບເພດດຽວກັນ, ການເປັນກະເທີຍຜູ້ຍິງ, ການຮ່ວມເພດກັບຄົນໃນຄອບຄົວດຽວກັນ, ຫລື ການເຮັດສິ່ງໃດໆທີ່ບໍ່ສັກສິດ, ຜິດທຳມະຊາດ, ຫລື ກິດຈະກຳທາງເພດທີ່ບໍ່ບໍລິສຸດ.

ມາເທາະ ຈົ່ງເອົາເຫລົ້າໃຫ້ພໍ່ດື່ມຈົນເມົາ, ເພື່ອພວກເຮົາຈະໄດ້ນອນນຳເພິ່ນ, **ປຖກ** 19:30–36. ຣູເບັນໄດ້ລັກນອນນຳນາງບິນຮາ ເມຍນ້ອຍຄົນໜຶ່ງຂອງພໍ່ຕົນ, **ປຖກ** 35:22 (ປຖກ 49:4; 1 ຂຄ 5:1). ການສົມສູ່ກັບຊາຍດ້ວຍກັນ ແລະ ການເຮັດຢ່າງບ້າຄັ່ງເຊັ່ນນີ້ເປັນທີ່ໜ້າກຽດຊັງ, **ລລວ** 18:22–23. ຖ້າວ່າຊາຍຜູ້ໜຶ່ງຂົ່ມຂືນຜູ້ຍິງ, ພຽງແຕ່ຜູ້ຊາຍເທົ່ານັ້ນທີ່ມີຄວາມຜິດ, **ພບຍ** 22:25–27.

ຜູ້ໃດທີ່ແນມເບິ່ງຜູ້ຍິງດ້ວຍໃຈຄຶດຢາກໄດ້ຍິງນັ້ນ, ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ, **ມທ** 5:28 (3 ນຟ 12:28). ການຜິດສິນທຳທາງເພດ, ການຊົ່ວຮ້າຍ, ຄວາມປາດຖະໜາໃນທາງຊົ່ວຮ້າຍ ເປັນການຂາບໄຫວ້ຮູບບູຊາ, **ກລຊ** 3:5. ໃນຍຸກສຸດທ້າຍນັ້ນ ຄົນທັງຫລາຍຈະເກີດຄວາມລຳບາກຢ່າງຮ້າຍແຮງ, **2 ຕມທ** 3:1–3.

ບາບທາງການຮ່ວມເພດເປັນຄວາມໜ້າກຽດຊັງ, **ແອວ** 39:3–5.

**ການຄືນສູ່ສະພາບເດີມ, ການຟື້ນຟູ.** *ເບິ່ງ* ການຟື້ນຟູພຣະກິດຕິຄຸນ *ນຳອີກ*

ການນຳກັບຄືນມາຂອງສິ່ງຂອງຫລືສະພາບການບາງຢ່າງທີ່ຖືກເອົາໄປ ຫລື ສູນເສຍໄປ.

ວິນ ຍານ ກັບ ຮ່າງ ກາຍ ຈະ ຮວມ ເຂົ້າ ກັນ ໃນຮູບລັກສະນະອັນສົມບູນຂອງມັນ, **ແອວ** 11:43–44. ການນຳກັບຄືນມານັ້ນຄືການນຳເອົາຄວາມຊົ່ວກັບມາຫາສິ່ງທີ່ຊົ່ວ, ຄວາມຊອບທຳກັບມາຫາສິ່ງທີ່ຊອບທຳ, **ແອວ** 41:10–15.

ພວກເຮົາເຊື່ອໃນການກັບຄືນມາຂອງຄົນສິບເຜົ່າ ແລະ ວ່າແຜ່ນດິນໂລກຈະຖືກເຮັດໃໝ່ ແລະ ໄດ້ຮັບລັດສະໝີພາບແຫ່ງສຸຂະເສີມຂອງມັນ, **ຫຼຊ** 1:10 (ຄພ 133:23–24).

**ການຄຸມກຳເນີດ.** *ເບິ່ງ* ຄອບຄົວ; ແຕ່ງງານ, ການແຕ່ງງານ *ບຳອີກ*

ການຄຸມຈຳນວນລູກທີ່ຈະມາເກີດນຳພໍ່ແມ່ໂດຍການຈຳກັດຈຳນວນ ຫລື ການປ້ອງກັນການຖືພາລ່ວງໜ້າ.

ຈົ່ງ ມີ ລູກ ເຕົ້າ ໃຫ້ ມາກຫລາຍ, ແລະ ເພີ່ມທະວີຈົນເຕັມແຜ່ນດິນໂລກ, **ປຖກ** 1:28 (ມຊ 2:28). ເດັກນ້ອຍຄືຂອງຂວັນທີ່ພຣະຜູ້ເປັນເຈົ້າໂຜດປະທານ, **ພສສ** 127:3–5.

ຄອບຄົວຂອງລີໄຮຕ້ອງມີລູກຫລານລ້ຽງໄວ້ໃຫ້ພຣະຜູ້ເປັນເຈົ້າ, **1 ນຟ** 7:1.

ການ ແຕ່ງງານ ໄດ້ ຮັບການ ແຕ່ງຕັ້ງຈາກພຣະເຈົ້າເພື່ອມະນຸດ, **ຄພ** 49:15–17. ຄົນທີ່ໄດ້ຮັບຄວາມສູງສົ່ງຈະໄດ້ຮັບຄວາມສົມບູນ ແລະ ຄວາມຕໍ່ເນື່ອງຂອງເຊື້ອສາຍຕະຫລອດການ ແລະ ຕະຫລອດໄປ, **ຄພ** 132:19, 63.

**ການສ້າງວິນຍານ.** *ເບິ່ງ* ສ້າງ, ການສ້າງ; ມະນຸດ *ບຳອີກ*

ພຣະຜູ້ເປັນເຈົ້າໄດ້ສ້າງທຸກສິ່ງທັງປວງທາງວິນຍານກ່ອນ, ແລ້ວພຣະອົງຈຶ່ງໄດ້ສ້າງມັນໃນເນື້ອໜັງ (ມຊ 3:5).

ພຣະຜູ້ເປັນເຈົ້າໄດ້ສ້າງພືດພັນທັນຍາຫານທັງໝົດ ກ່ອນ ມັນ ມາຢູ່ເທິງແຜ່ນດິນໂລກ, **ປຖກ** 2:4–6 (ອຣຮ 5:5).

ເພາະໂດຍອຳນາດແຫ່ງວິນຍານຂອງເຮົາ, ເຮົາໄດ້ສ້າງທຸກສິ່ງ, ທຳອິດແມ່ນຝ່າຍວິນຍານ, ທີສອງແມ່ນຝ່າຍໂລກ, **ຄພ** 29:31–32. ສິ່ງທີ່ເປັນຝ່າຍໂລກມີຮູບລັກສະນະເປັນຄືກັນກັບສິ່ງທີ່ເປັນຝ່າຍວິນຍານ, **ຄພ** 77:2.

ເຮົາໄດ້ສ້າງໂລກ ແລະ ມະນຸດກ່ອນພວກເຂົາເປັນຢູ່ໃນເນື້ອໜັງ, **ມຊ** 6:51.

**ການສະໜັບສະໜູນຜູ້ນຳຂອງສາດສະໜາຈັກ.** *ເບິ່ງ* ເຫັນຊອບນຳກັນ *ບຳອີກ*

ການປະຕິຍານທີ່ຈະສົ່ງເສີມຜູ້ຄົນທີ່ຮັບໃຊ້ໃນຕຳແໜ່ງຊັ້ນຜູ້ໃຫຍ່ ແລະ ໃນທ້ອງຖິ່ນ ຂອງສາດສະໜາຈັກ.

ໃຫ້ໂຢຊວຍຢືນຢູ່ຕໍ່ໜ້າຊຸມຊົນທັງໝົດ, ແລະແຕ່ງຕັ້ງລາວຕໍ່ໜ້າພວກເຂົາ, **ຈບຊ** 27:18–19. ປະຊາຊົນໄດ້ຮ້ອງຂຶ້ນວ່າ, ຂໍໃຫ້ກະສັດຈົ່ງໝັ້ນຍືນ, **1 ຊມອ** 10:24. ຈົ່ງເຊື່ອໝັ້ນສິ່ງທີ່ຜູ້ທຳນວຍບອກພວກທ່ານ, ແລະ ພວກທ່ານຈະເຮັດສຳເລັດໜ້າທີ່, **2 ຂຄ** 20:20.

ຈົ່ງຍອມຢູ່ໃນໂອວາດຜູ້ນຳຂອງພວກເຈົ້າ, **ຮຮ** 13:17.

ລູກຈະເປັນທີ່ໂປດປານຂອງພຣະຜູ້ເປັນເຈົ້າ, ເພາະລູກບໍ່ໄດ້ຈົ່ມ, **1 ນຟ** 3:6. ຜູ້ທີ່ໄດ້ຕ້ອນຮັບສາດສະດາ ໄດ້ຮັບການໄວ້ຊີວິດ, **3 ນຟ** 10:12–13. ຈົ່ງເອົາໃຈໃສ່ຕໍ່ຖ້ອຍຄຳຂອງສິບສອງຄົນນີ້, **3 ນຟ** 12:1.

ບໍ່ວ່າຈະເປັນໂດຍສຽງຂອງເຮົາເອງ ຫລືໂດຍສຽງຂອງຜູ້ຮັບໃຊ້ຂອງເຮົາ, ມັນກໍເໝືອນກັນ, **ຄພ** 1:38. ຖ້ອຍຄຳທີ່ພວກເຈົ້າຈະໄດ້ຮັບ, ກໍຄືກັບວ່າມັນມາຈາກປາກຂອງເຮົາເອງ, **ຄພ** 21:5. ຄົນໃດທີ່ຮັບເອົາຜູ້ຮັບໃຊ້ຂອງເຮົາ, ກໍຮັບເອົາເຮົາຄືກັນ, **ຄພ** 84:35–38. ຄົນໃດທີ່ຮັບເອົາເຮົາ, ຈະຮັບເອົາຄົນທີ່ເຮົາໄດ້ສົ່ງມາ, **ຄພ** 112:20. ຖ້າຫາກຜູ້ຄົນຂອງເຮົາບໍ່ເຊື່ອຟັງສຽງຂອງຜູ້ຊາຍເຫລົ່ານີ້ ຜູ້ຊຶ່ງເຮົາໄດ້ກຳນົດໄວ້, ແລ້ວພວກເຂົາຈະບໍ່ໄດ້ຮັບພອນ, **ຄພ** 124:45–46.

**ການສາມາດສັງເກດ, ຂອງປະທານແຫ່ງ.** *ເບິ່ງ* ຂອງປະທານແຫ່ງພຣະວິນຍານ *ບຳອີກ*

ທີ່ຈະເຂົ້າໃຈ ຫລື ຮູ້ບາງສິ່ງຜ່ານອຳນາດຂອງພຣະວິນຍານ. ຂອງປະທານແຫ່ງການສາມາດຫລິງເຫັນເປັນຂອງປະທານໜຶ່ງຂອງພຣະວິນຍານ. ມັນຮ່ວມດ້ວຍການຮູ້ຈັກບຸກຄະລິກລັກສະນະທີ່ແທ້ຈິງຂອງຜູ້ຄົນ ແລະ ເປັນ

ແຫລ່ງ ແລະ ຄວາມ ໝາຍ ຂອງ ການ ສະແດງ ໃຫ້ປະຈັກທາງວິນຍານ.

ມະນຸດເບິ່ງພາຍ ນອກ ແຕ່ພຣະຜູ້ເປັນເຈົ້າ ເບິ່ງພາຍໃນຈິດໃຈ, **1 ຊມອ** 16:7. ເຄາະກຳ ເປັນຂອງຜູ້ ທີ່ ເອີ້ນສິ່ງທີ່ຊົ່ວວ່າ ເປັນສິ່ງທີ່ ດີ, **ອຊຢ** 5:20 (2 ນຟ 15:20).

ສິ່ງທີ່ເປັນຂອງພຣະເຈົ້າເປັນການສາມາດ ຫລິງເຫັນ ເລື່ອງທາງວິນຍານ, **1 ກຣທ** 2:14. ໃຫ້ຄົນໜຶ່ງອີກຮູ້ຈັກຫລິງເຫັນວິນຍານຕ່າງໆ, **1 ກຣທ** 12:10.

ອຳໂມນ ສາ ມາດ ຫລິງ ເຫັນ ຄວາມ ນຶກຄິດ ຂອງເພິ່ນໄດ້, **ແອວ** 18:18. ສຽງທີ່ເບົາໄດ້ສຽບ ແທງຜູ້ທີ່ໄດ້ຍິນ, **3 ນຟ** 11:3.

ເພື່ອ ວ່າ ເຈົ້າ ຈະ ບໍ່ ຖືກ ຫລອກ ລວງ, ຈົ່ງ ສະແຫວງ ຫາ ຂອງປະທານ ທີ່ດີທີ່ສຸດ, **ຄພ** 46:8, 23. ຜູ້ນຳຂອງສາດສະໜາ ຈັກໄດ້ຮັບ ອຳນາດ ທີ່ ຈະ ຫລິງ ເຫັນ ຂອງ ປະທານ ແຫ່ງ ພຣະ ວິນ ຍານ, **ຄພ** 46:27. ຮ່າງກາຍນັ້ນຊຶ່ງ ເຕັມໄປດ້ວຍຄວາມສະຫວ່າງເຂົ້າໃຈທຸກສິ່ງ ທັງປວງ, **ຄພ** 88:67.

ໂມເຊໄດ້ເຫັນແຜ່ນດິນໂລກ, ໂດຍໄດ້ຫລິງ ເຫັນມັນດ້ວຍພຣະວິນຍານຂອງພຣະເຈົ້າ, **ມຊ** 1:27.

**ການຕົກຂອງອາດາມ ແລະ ເອວາ.** *ເບິ່ງ* ຄວາມຕາຍທາງວິນຍານ; ຄວາມຕາຍທາງ ຮ່າງກາຍ; ຊົດໃຊ້, ການຊົດໃຊ້; ໄຖ່, ການ ໄຖ່, ຖືກໄຖ່; ແຜນແຫ່ງການໄຖ່; ພຣະເຢຊູ ຄຣິດ; ມະຕະ, ຄວາມເປັນມະຕະ; ມະນຸດທີ່ ມີຈິດໃຈທຳມະດາ; ອາດາມ; ເອວາ *ບຳອີກ*

ຂັ້ນຕອນທີ່ເຮັດໃຫ້ມະນຸດຊາດກາຍເປັນ ມະຕະຢູ່ເທິງແຜ່ນດິນໂລກນີ້. ເມື່ອອາດາມ ແລະ ເອວາ ໄດ້ກິນໝາກໄມ້ທີ່ຕ້ອງຫ້າມ, ເຂົາ ເຈົ້າໄດ້ກາຍ ເປັນມະຕະ, ນັ້ນແມ່ນ, ຂຶ້ນກັບ ບາບ ແລະ ຄວາມຕາຍ. ອາດາມໄດ້ກາຍເປັນ "ເນື້ອໜັງທຳອິດ" ຢູ່ເທິງແຜ່ນດິນໂລກ (ມຊ 3:7). ການເປີດເຜີຍຍຸກສຸດທ້າຍເຮັດໃຫ້ແຈ່ມ ແຈ້ງວ່າ ການຕົກເປັນພອນ ແລະ ວ່າອາດາມ ແລະ ເອວາ ຄວນໄດ້ຮັບກຽດໃນຖານະທີ່ເປັນ ພໍ່ແມ່ຜູ້ທຳອິດຂອງມະນຸດຊາດທັງປວງ.

ການ ຕົກ ເປັນ ຂັ້ນ ຕອນ ທີ່ ສຳ ຄັນ ສຳ ລັບ ຄວາມກ້າວໜ້າຂອງມະນຸດ. ເພາະພຣະເຈົ້າ ໄດ້ຮູ້ວ່າ ການຕົກຈະ ເກີດຂຶ້ນ, ພຣະອົງຈຶ່ງ ໄດ້ວາງແຜນຊີວິດກ່ອນມະຕະ ໃຫ້ມີພຣະຜູ້ ຊ່ວຍໃຫ້ລອດ. ພຣະເຢຊູຄຣິດໄດ້ມາໃນເວລາ ອັນຮຸ່ງໂລດທີ່ຈະຊົດໃຊ້ສຳລັບການຕົກຂອງ ອາດາມ ແລະ ສຳລັບບາບສ່ວນຕົວຂອງທຸກ ຄົນບຳອີກ ຕາມເງື່ອນໄຂແຫ່ງການກັບໃຈ ຂອງມະນຸດ.

ຖ້າ ຂືນກິນ ເມື່ອ ໃດ ເຈົ້າ ຈະ ຕາຍ ເມື່ອ ນັ້ນ, **ປຖກ** 2:17 (ມຊ 3:17). ດັ່ງນັ້ນນາງຈຶ່ງປິດເອົາ ໝາກໄມ້ມາກິນ, **ປຖກ** 3:6 (ມຊ 4:12).

ດ້ວຍ ວ່າຄົນທັງ ປວງໄດ້ ຕາຍ ເພາະກ່ຽວ ເນື່ອງກັບອາດາມສັນໃດ ຄົນທັງປວງກໍຈະຖືກ ບັນດານໃຫ້ມີຊີວິດ ເພາະກ່ຽວເນື່ອງກັບພຣະ ຄຣິດສັນນັ້ນ, **1 ກຣທ** 15:22.

ມະນຸດຊາດທັງປວງ ຊຶ່ງຢູ່ໃນສະພາບຫາຍ ຍະ ນະ ຢູ່ ໃນ ສະ ພາບ ຕົກຕ່ຳ, **1 ນຟ** 10:6. ທາງຖືກຕຽມໄວ້ຕັ້ງແຕ່ການຕົກຂອງມະນຸດ, **2 ນຟ** 2:4. ຫລັງ ຈາກ ອາດາມ ແລະ ເອວາ ໄດ້ຮັບສ່ວນໝາກໄມ້ທີ່ຕ້ອງຫ້າມແລ້ວ ເຂົາ ທັງສອງຖືກໄລ່ອອກຈາກສວນເອເດນໃຫ້ໄປ ໄຖດິນ, **2 ນຟ** 2:19. ອາດາມຕົກເພື່ອມະນຸດ ຈະໄດ້ເປັນຢູ່, **2 ນຟ** 2:15–26. ມະນຸດທີ່ມີຈິດ ໃຈທຳມະດາເປັນສັດຕູກັບພຣະເຈົ້າ, ແລະ ເປັນມາແລ້ວຕັ້ງແຕ່ການຕົກຂອງອາດາມ, **ມຊຢ** 3:19. ອາໂຣນໄດ້ສິດສອນບິດາຂອງ ລາໂມໄນກ່ຽວກັບການຕົກ, **ແອວ** 22:12–14. ຈະຕ້ອງມີການຊົດໃຊ້ເກີດຂຶ້ນ ຖ້າບໍ່ດັ່ງນັ້ນ ມະນຸດຊາດທັງປວງຕ້ອງຕົກ ແລະ ຫລົງທາງ ໄປ, **ແອວ** 34:9. ບິດາມານດາຜູ້ທຳອິດຂອງ ພວກເຮົາຖືກຕັດອອກຈາກທີ່ປະທັບຂອງ ພຣະຜູ້ເປັນເຈົ້າທັງທາງໂລກ ແລະ ທາງວິນ ຍານ, **ແອວ** 42:2–15 (ຣລມ 14:16). ຍ້ອນ ການຕົກທຳມະຊາດຂອງພວກຂ້ານ້ອຍ ຈຶ່ງ ກັບມາຊົ່ວຢູ່, **ອທ** 3:2.

ໂດຍການລ່ວງລະເມີດກົດທີ່ສັກສິດເຫລົ່າ ນີ້ ມະນຸດຈຶ່ງໄດ້ກາຍເປັນມະນຸດທີ່ຕົກໄປ, **ຄພ** 20:20 (ຄພ 29:34–44).

ດັ່ງທີ່ ເຈົ້າ ໄດ້ ຕົກ ເຈົ້າຈະໄດ້ຖືກໄຖ່, **ມຊ**

5:9–12. ໂດຍເຫດຜົນຂອງການລ່ວງລະເມີດການຕົກຈຶ່ງມີມາ, **ມຊ** 6:59. ມະນຸດຈະໄດ້ຮັບໂທດເພາະບາບຂອງຕົນ, **ຫຼຊ** 1:2.

**ການຖືກໄລ່ອອກ.** *ເບິ່ງ* ກະບົດ, ການກະບົດ; ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ *ນຳອີກ*

ການ ຖືກໄລ່ອອກເປັນການລົງໂທດທີ່ໜັກໜ່ວງທີ່ສຸດໃນສາດສະໜາຈັກ. ບຸກຄົນທີ່ຖືກໄລ່ອອກບໍ່ໄດ້ເປັນສະມາຊິກຂອງສາດສະໜາຈັກອີກຕໍ່ໄປ. ເຈົ້າໜ້າທີ່ຂອງສາດສະໜາຈັກຈະໄລ່ບຸກຄົນອອກຈາກສາດສະໜາຈັກ ພຽງແຕ່ເມື່ອເຂົາເລືອກທີ່ຈະດຳລົງຊີວິດທີ່ກົງກັນຂ້າມກັບພຣະບັນຍັດຂອງພຣະຜູ້ເປັນເຈົ້າ ແລະ ດັ່ງນັ້ນຈຶ່ງຕັດສິນຕົນເອງອອກຈາກການເປັນສະມາຊິກໃນສາດສະໜາຈັກ.

ໃຈຂອງຫລາຍຄົນແຂງກະດ້າງ, ແລະ ຊື່ຂອງພວກເຂົາໄດ້ຖືກລຶບ, **ແອວ** 1:24 (ແອວ 6:3). ຖ້າຫາກເຂົາບໍ່ກັບໃຈ ເຂົາຈະບໍ່ຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຂອງເຮົາ, **3 ນຟ** 18:31 (ມຊຢ 26).

ຄົນຫລິ້ນຊູ້ທີ່ບໍ່ກັບໃຈ ຈະຖືກຂັບໄລ່ອອກໄປ, **ຄພ** 42:24. ຄົນທີ່ເຮັດບາບ ແລະ ບໍ່ກັບໃຈຈະຖືກຂັບໄລ່ອອກໄປ, **ຄພ** 42:28. ລະບຽບການໄດ້ຖືກມອບໃຫ້ສຳລັບການແກ້ໄຂບັນຫາທີ່ສຳຄັນຢູ່ໃນສາດສະໜາຈັກ, **ຄພ** 102 (ຄພ 42:80–93). ອະທິການໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ຕັດສິນໃນອິດສະຣາເອນ, **ຄພ** 107:72. ສັງຄົມສາດສະໜາມີສິດທີ່ຈະຈັດການກັບສະມາຊິກຂອງຕົນສຳລັບການປະພຶດທີ່ບໍ່ຖືກຕ້ອງ, **ຄພ** 134:10.

**ການນັບຖືຮູບບູຊາ**

ການນະມັດສະການຮູບບູຊາ ຫລື ການຕິດແທດ ຫລື ການອຸທິດຕົນຕໍ່ສິ່ງໃດສິ່ງໜຶ່ງຫລາຍເກີນໄປ.

ຢ່ານະມັດສະການພຣະອື່ນ ນອກຈາກເຮົາແຕ່ເທົ່ານັ້ນ, **ອພຍ** 20:3 (ມຊຢ 12:35; 13:12–13). ຖ້າພວກເຈົ້າຂາບໄຫວ້ພຣະອື່ນ, ພວກເຈົ້າຈະຖືກທຳລາຍຢ່າງແນ່ນອນ, **ພບຍ** 8:19. ຄວາມອວດດີກໍເປັນຄວາມຊົ່ວຮ້າຍເທົ່າກັບການຂາບໄຫວ້ຮູບບູຊາ, **1 ຊມອ** 15:23. ພວກເຈົ້າປະຖິ້ມເຮົາ, **ອຊຢ** 57:8. ພວກເຈົ້າໄດ້ສັນລະເສີນບັນດາພຣະທີ່ເຮັດດ້ວຍເງິນ, ດ້ວຍຄຳ, **ດນອ** 5:23.

ພວກເຈົ້າຈະຮັບໃຊ້ພຣະເຈົ້າ ແລະ ເງິນຄຳພ້ອມກັນກໍບໍ່ໄດ້, **ມທ** 6:24. ຄວາມໂລບເປັນການຂາບໄຫວ້ຮູບບູຊາ, **ກລຊ** 3:5. ລູກທັງຫລາຍຂອງເຮົາເອີຍ, ຈົ່ງລະວັງຮັກສາຕົນຈາກບັນດາຮູບບູຊາ, **1 ຢຮ** 5:21.

ວິບັດແກ່ຄົນທີ່ນະມັດສະການຮູບບູຊາ, **2 ນຟ** 9:37. ການນັບຖືຮູບບູຊາຂອງຜູ້ຄົນຂອງນີໄຟໄດ້ນຳເອົາສົງຄາມ ແລະ ຄວາມພິນາດມາສູ່ຕົນ, **ແອວ** 50:21.

ມະນຸດທຸກຄົນໄດ້ເດີນໄປໃນທາງຂອງຕົນເອງ, **ຄພ** 1:16. ໃຫ້ພວກເຂົາອອກແຮງດ້ວຍມືຂອງຕົນເອງ ເພື່ອວ່າພວກເຂົາຈະບໍ່ໄດ້ເຄົາລົບຮູບບູຊາ, **ຄພ** 52:39.

ບິດາຂອງອັບຣາຮາມໄດ້ຖືກພາໄປຫລົງຜິດໂດຍການນັບຖືຮູບບູຊາ, **ອຣຮ** 1:27.

**ການບັບຕິສະມາຂອງເດັກແດງທາລົກ.** *ເບິ່ງ* ເດັກ, ເດັກນ້ອຍ; ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາບໍ່ແມ່ນສຳລັບເດັກແດງທາລົກ; ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ *ນຳອີກ*

ການປະຕິບັດທີ່ບໍ່ຈຳເປັນເລື່ອງການບັບຕິສະມາໃຫ້ເດັກແດງທາລົກ ແລະ ເດັກນ້ອຍທີ່ຍັງບໍ່ເຖິງອາຍຸທີ່ສາມາດຮັບຜິດຊອບ, ຊຶ່ງເປັນແປດປີ. ພຣະຜູ້ເປັນເຈົ້າກ່າວໂທດການບັບຕິສະມາໃຫ້ເດັກແດງທາລົກ (ມຣນ 8:10–21). ເດັກນ້ອຍເກີດມາຢ່າງໄຮ້ດຽງສາ ແລະ ປາດສະຈາກບາບ. ຊາຕານບໍ່ມີອຳນາດທີ່ຈະລໍ້ລວງເດັກນ້ອຍໄດ້ຈົນກວ່າເຂົາເຖິງອາຍຸທີ່ສາມາດຮັບຜິດຊອບ (ຄພ 29:46–47) ສະນັ້ນເຂົາຈຶ່ງບໍ່ຈຳເປັນທີ່ຈະກັບໃຈ ຫລື ຮັບບັບຕິສະມາ. ເດັກນ້ອຍຄວນຮັບບັບຕິສະມາເມື່ອເຖິງອາຍຸແປດປີ (ຄພ 68:25–27).

**ການປະຕິບັດຕໍ່ຄົນເຈັບປ່ວຍ.** *ເບິ່ງ* ເຈີມ, ການເຈີມ; ຖານະປະໂລຫິດ; ນ້ຳມັນ; ປິ່ນປົວ, ການປິ່ນປົວ; ມື, ການວາງ *ນຳອີກ*

ພອນທີ່ໄດ້ມອບໃຫ້ແກ່ຄົນເຈັບປ່ວຍໂດຍຜູ້ຊາຍທີ່ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກ, ຮ່ວມດ້ວຍການໃຊ້ນ້ຳມັນທີ່ສັກສິດ.

ວາງມືໃສ່ນາງດ້ວຍເທີ້ນ, **ມທ** 9:18. ພຣະເຢຊູໄດ້ວາງມືໃສ່ຄົນເຈັບໄຂ້ໄດ້ປ່ວຍບາງຄົນ ແລະ ໄດ້ໂຜດພວກເຂົາໃຫ້ຫາຍດີ, **ມຣກ** 6:5. ອັກຄະສາວົກຂອງພຣະຄຣິດໄດ້ເອົານ້ຳມັນຊະໂລມທາພວກເຂົາຫລາຍຄົນໃຫ້ຫາຍດີພະຍາດ, **ມຣກ** 6:13. ແອວເດີຕ້ອງເຈີມ ແລະ ປິ່ນປົວຄົນເຈັບປ່ວຍ, **ຢກບ** 5:14–15. ເຈົ້າຈະບໍ່ປິ່ນປົວຄົນເຈັບປ່ວຍ, ຍົກເວັ້ນແຕ່ຖືກຮຽກຮ້ອງໃຫ້ເຮັດໂດຍຄົນທີ່ປາດຖະໜາມັນເທົ່ານັ້ນ, **ຄພ** 24:13–14. ແອວເດີຈະວາງມືຂອງພວກເຂົາໃສ່ເທິງຄົນເຈັບປ່ວຍ, **ຄພ** 42:44. ຈົ່ງວາງມືຂອງເຈົ້າໃສ່ເທິງຄົນທີ່ເຈັບປ່ວຍ, ແລະ ພວກເຂົາຈະຫາຍດີ, **ຄພ** 66:9.

**ການຟື້ນຟູພຣະກິດຕິຄຸນ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ຍຸກສະໄໝ; ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ; ພຣະກິດຕິຄຸນ *ນຳອີກ*

ການສະຖາປະນາຄວາມຈິງ ແລະ ພິທີການແຫ່ງພຣະກິດຕິຄຸນຂອງພຣະເຈົ້າຄືນມາໃໝ່ໃນບັນດາມະນຸດ ຢູ່ເທິງໂລກ. ພຣະກິດຕິຄຸນຂອງພຣະເຢຊູຄຣິດໄດ້ຖືກສູນເສຍໄປຈາກແຜ່ນດິນໂລກ ຜ່ານການປະຖິ້ມຄວາມເຊື່ອ ທີ່ໄດ້ເກີດຂຶ້ນ ຫລັງຈາກການປະຕິບັດສາດສະໜາກິດຢູ່ເທິງແຜ່ນດິນໂລກຂອງອັກຄະສາວົກຂອງພຣະຄຣິດ. ການປະຖິ້ມຄວາມເຊື່ອນັ້ນແມ່ນຈຳເປັນຕໍ່ການຟື້ນຟູພຣະກິດຕິຄຸນ. ຜ່ານພາບນິມິດ, ການປະຕິບັດຂອງເຫລົ່າທູດ, ແລະ ການເປີດເຜີຍຕໍ່ມະນຸດຢູ່ເທິງແຜ່ນດິນໂລກ, ພຣະເຈົ້າຈຶ່ງໄດ້ຟື້ນຟູພຣະກິດຕິຄຸນຄືນມາໃໝ່. ການຟື້ນຟູໄດ້ເລີ່ມຕົ້ນດ້ວຍສາດສະດາໂຈເຊັບ ສະມິດ (ຈສ—ປ 1; ຄພ 128:20–21) ແລະ ໄດ້ສືບຕໍ່ມາຈົນເຖິງປະຈຸບັນ ຜ່ານວຽກງານຂອງສາດສະດາທີ່ມີຊີວິດຢູ່ຂອງພຣະຜູ້ເປັນເຈົ້າ.

ພູບ່ອນທີ່ຕັ້ງພຣະວິຫານຈະສູງກວ່າທຸກໆແຫ່ງ, **ອຊຢ** 2:2 (ມກ 4:2; 2 ນຟ 12:2). ພຣະເຈົ້າຈະເຮັດການງຶດງໍ້, **ອຊຢ** 29:14 (2 ນຟ 25:17–18; ຄພ 4:1). ພຣະເຈົ້າຈະຕັ້ງອານາຈັກໜຶ່ງຂຶ້ນ ຊຶ່ງຈະບໍ່ສູນຫາຍໄປຈັກເທື່ອ, **ດນອ** 2:44.

ເອລີຢາ ຕ້ອງມາກ່ອນ, ແລະ ເພື່ອຈັດແຈງທຸກສິ່ງໃຫ້ພ້ອມ, **ມທ** 17:11 (ມຣກ 9:12; ຄພ 77:14). ເວລາຈະມາເຖິງເມື່ອທຸກສິ່ງຈະຖືກຕັ້ງຂຶ້ນໃໝ່, **ກຈກ** 3:21 (ຄພ 27:6). ໃນຍຸກສະໄໝຂອງຄວາມສົມບູນແຫ່ງເວລາ, ພຣະເຈົ້າຈະຮວບຮວມສິ່ງສາລະພັດ, **ອຟຊ** 1:10. ຂ້າພະເຈົ້າໄດ້ເຫັນທູດອົງໜຶ່ງມີຂ່າວປະເສີດອັນເປັນນິດນຳໄປປະກາດ, **ພນມ** 14:6.

ຄວາມສົມບູນຂອງພຣະກິດຕິຄຸນຈະມາສູ່ຄົນຕ່າງຊາດ, **1 ນຟ** 15:13–18. ຊາວຢິວຈະຖືກນຳກັບຄືນສູ່ສາດສະໜາຈັກ, **2 ນຟ** 9:2. ໃນຍຸກສຸດທ້າຍຄວາມຈິງຈຶ່ງຈະມາເຖິງ, **3 ນຟ** 16:7.

ກັບພວກທ່ານ ຂ້າພະເຈົ້າຂໍມອບຖານະປະໂລຫິດແຫ່ງອາໂຣນໃຫ້, **ຄພ** 13 (ຈສ—ປ 1:69). ເຮົາໄດ້ມອບຂໍກະແຈຂອງອານາຈັກເທື່ອສຸດທ້າຍໃຫ້, **ຄພ** 27:6, 13–14 (ຄພ 128:19–21). ເຕົ້າໂຮມເຜົ່າຕ່າງໆຂອງອິດສະຣາເອນເຂົ້າກັນ ແລະ ຟື້ນຟູທຸກສິ່ງທັງປວງ, **ຄພ** 77:9. ຂໍກະແຈຂອງຍຸກສະໄໝນີ້ຈຶ່ງຖືກມອບໄວ້, **ຄພ** 110:16 (ຄພ 65:2). ຖານະປະໂລຫິດໄດ້ຖືກມອບໃຫ້ໃນຍຸກສະໄໝຂອງຄວາມສົມບູນແຫ່ງເວລາ, **ຄພ** 112:30.

ຂ້າພະເຈົ້າໄດ້ເຫັນສອງພຣະອົງ, **ຈສ—ປ** 1:17. ເຮົາຈະເປີດເຜີຍຖານະປະໂລຫິດແກ່ເຈົ້າ, ໂດຍມືຂອງເອລີຢາ, **ຈສ—ປ** 1:38 (ມລກ 4:5–6).

**ການມີເມຍຫລາຍຄົນ.** *ເບິ່ງ* ແຕ່ງງານ, ການແຕ່ງງານ—ການມີເມຍຫລາຍຄົນ

**ການມົ້ວສຸມລັບ.** *ເບິ່ງ* ກາອິນ; ພວກໂຈນແກດີອານທັນ *ນຳອີກ*

ຜູ້ຄົນກຸ່ມໜຶ່ງທີ່ເຂົ້າຮ່ວມກັນໂດຍການເຮັດຄຳສາບານ ວ່າຈະບັນລຸຈຸດປະສົງທີ່ຊົ່ວຮ້າຍຂອງພວກເຂົາ.

ບິດາແຫ່ງຄວາມຂີ້ຕົວະ ຍຸຍົງໃຫ້ລູກຫລານມະນຸດເຮັດການ ມົ້ວສຸມລັບ, **2 ນຟ** 9:9. ເຮົາຈະຕ້ອງທຳລາຍວຽກງານລັບແຫ່ງຄວາມມືດ, **2 ນຟ** 10:15. ການພິພາກສາຂອງພຣະເຈົ້າໄດ້ເກີດຂຶ້ນ ກັບຜູ້ທີ່ເຮັດການມົ້ວສຸມລັບ, **ແອວ** 37:30. ແກດີອານທັນ ຜູ້ນີ້ໄດ້ເປັນຕົ້ນເຫດເກືອບຈະເປັນການທຳລາຍຜູ້ຄົນຂອງນີໄຟໃຫ້ສູນສິ້ນໄປ, **ຮລມ** 2:4–13. ຊາຕານໄດ້ເອົາເຂົ້າໃສ່ໃນໃຈຂອງຜູ້ຄົນ ເພື່ອໃຫ້ເຮັດຄຳສາບານ ແລະ ເຮັດພັນທະສັນຍາລັບ, **ຮລມ** 6:21–31. ພຣະຜູ້ເປັນເຈົ້າບໍ່ໄດ້ເຮັດວຽກໃນການມົ້ວສຸມລັບ, **ອທ** 8:19. ປະຊາຊາດໃດກໍຕາມທີ່ສະໜັບສະໜູນການມົ້ວສຸມລັບ ປະຊາຊາດນັ້ນຈະຖືກທຳລາຍ, **ອທ** 8:22–23. ພວກເຂົາບໍ່ໄດ້ຍອມຮັບຄຳທັງໝົດຂອງສາດສະດາເລີຍ, ຍ້ອນວ່າສັງຄົມລັບຂອງພວກເຂົາ, **ອທ** 11:22.

ນັບແຕ່ວັນເວລາຂອງກາອິນ, ມັນໄດ້ມີການມົ້ວສຸມລັບ, **ມຊ** 5:51.

**ການຢູ່ເປັນໂສດ.** *ເບິ່ງ* ແຕ່ງງານ, ການແຕ່ງງານ

**ການລ່ວງປະເວນີ.** *ເບິ່ງ* ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ພົມມະຈັນ; ຫລິ້ນຊູ້ *ນຳອີກ*

ການຮ່ວມເພດທີ່ບໍ່ຖືກຕ້ອງທາງກົດໝາຍລະຫວ່າງສອງຄົນທີ່ບໍ່ໄດ້ແຕ່ງງານກັນ. ບາງຄັ້ງໃນພຣະຄຳພີ ມັນກໍຖືກໃຊ້ເປັນສັນຍາລັກເຖິງການປະຖິ້ມຄວາມເຊື່ອຄືກັນ.

ຈົ່ງລະເວັ້ນຈາກການຫລິ້ນຊູ້, **ກຈກ** 15:20. ຮ່າງກາຍບໍ່ແມ່ນສຳລັບການຫລິ້ນຊູ້, ແຕ່ແມ່ນສຳລັບພຣະຜູ້ເປັນເຈົ້າ, **1 ກຣທ** 6:13–18. ເພື່ອປ້ອງກັນການຫລິ້ນຊູ້, ໃຫ້ຊາຍທຸກຄົນມີເມຍຂອງຕົນເອງ, **1 ກຣທ** 7:2–3. ສິ່ງນີ້ແຫລະແມ່ນພຣະປະສົງຂອງພຣະເຈົ້າ, ຄືໃຫ້ພວກເຈົ້າເວັ້ນຈາກການຜິດສິນທຳທາງເພດ, **1 ທສນ** 4:3.

ຢາໂຄບໄດ້ເຕືອນຜູ້ຄົນຂອງນີໄຟບໍ່ໃຫ້ລ່ວງປະເວນີ, **ຢຄ** 3:12. ພວກທ່ານກຳລັງສຸກເພື່ອຄວາມພິນາດ, ເພາະການຄາດຕະກຳຂອງພວກທ່ານ ແລະ ການລ່ວງປະເວນີ, **ຮລມ** 8:26. ຕ້ອງກັບໃຈຈາກການລ່ວງປະເວນີ ກ່ອນຈະເຂົ້າຮ່ວມສາດສະໜາຈັກໄດ້, **ຄພ** 42:74–78.

**ການລົງໄປໃນນ້ຳໝົດທັງຕົວ.** *ເບິ່ງ* ບັບຕິສະມາ, ໃຫ້ບັບຕິສະມາ—ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ

**ການຮ່ວມເພດກັບເພດດຽວກັນ.** *ເບິ່ງ* ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ຫລິ້ນຊູ້ *ນຳອີກ*

ການຮ່ວມເພດກັບເພດດຽວກັນ. ພຣະເຈົ້າສັ່ງຫ້າມການກະທຳທາງເພດເຊັ່ນນີ້.

ເອົາພວກເຂົາອອກມາໃຫ້ພວກເຮົາສາ, **ປຖກ** 19:1–11 (ມຊ 5:51–53). ຊາຍຢ່າໄດ້ສົມສູ່ກັບຊາຍ; ເພາະການກະທຳເຊັ່ນນີ້ພຣະເຈົ້າຊັງທີ່ສຸດ, **ລລວ** 18:22 (ລລວ 20:13). ຢ່າໃຫ້ຊາວອິດສະຣາເອນບໍ່ວ່າຊາຍ ຫລື ຍິງເປັນໂສເພນີ, **ພບຍ** 23:17. ພວກເຂົາເຮັດບາບຢ່າງເປີດເຜີຍດັ່ງຊາວໂຊໂດມໄດ້ເຮັດ, **ອຊຢ** 3:9 (2 ນຟ 13:9).

ພວກຜູ້ຊາຍເຕັມດ້ວຍໄຟແຫ່ງກິເລດຕັນຫາຕໍ່ກັນແລະກັນ, **ຣມ** 1:27. ຄົນຊົ່ວຊ້າອະທຳຈະບໍ່ມີສ່ວນໃນອານາຈັກຂອງພຣະເຈົ້າ, **1 ກຣທ** 6:9–10. ກົດໝາຍນັ້ນບໍ່ໄດ້ຕັ້ງໄວ້ສຳລັບຄົນດີ, ແຕ່ຕັ້ງໄວ້ສຳລັບຄົນທີ່ສ້າງຄວາມເສື່ອມເສຍໃຫ້ກັບຜູ້ອື່ນ, **1 ຕມທ** 1:9–10. ຄົນທີ່ມົ້ວສຸມການຜິດສິນທຳ, ຈະທຸກທໍລະມານຕະຫລອດໄປເປັນນິດ, **ຢດ** 1:7.

**ການເຕົ້າໂຮມຊາວອິດສະຣາເອນ.** *ເບິ່ງ* ອິດສະຣາເອນ—ການເຕົ້າໂຮມຊາວອິດສະຣາເອນ

**ການເວົ້າພາສາ, ຂອງປະທານແຫ່ງ.** *ເບິ່ງ* ຂອງປະທານແຫ່ງພຣະວິນຍານ; ລີ້ນ *ນຳອີກ*

ຂອງປະທານແຫ່ງພຣະວິນຍານບໍລິສຸດ ທີ່ຖືກອະນຸຍາດໃຫ້ດົນໃຈບຸກຄົນ ໃຫ້ກ່າວ, ໃຫ້ເຂົ້າໃຈ, ຫລື ແປພາສາທີ່ບໍ່ຮູ້ຈັກດີ. ພວກເຮົາເຊື່ອໃນຂອງປະທານແຫ່ງການເວົ້າພາສາ (ຫຼຊ 1:7).

ເຂົາເຈົ້າເຕັມໄປດ້ວຍພຣະວິນຍານບໍລິສຸດ, ແລະ ເລີ່ມປາກພາສາຕ່າງໆ, **ກຈກ** 2:4. ຜູ້ທີ່ເວົ້າພາສາແປກໆກໍບໍ່ໄດ້ເວົ້າຕໍ່ມະນຸດ, ແຕ່ທູນຕໍ່ກັບພຣະເຈົ້າ, **1 ກຣທ** 14:1–5, 27–28. ການເວົ້າພາສາເປັນເຄື່ອງໝາຍແກ່ຄົນທີ່ບໍ່ເຊື່ອ, **1 ກຣທ** 14:22–28.

ເມື່ອນັ້ນການບັບຕິສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດຈະມາເຖິງ; ແລະ ເມື່ອນັ້ນພວກທ່ານຈະເວົ້າໄດ້ດ້ວຍລີ້ນຂອງທູດ, **2 ນຟ** 31:13–14. ອາມາລະໄຄໄດ້ຊັກຊວນມະນຸດທັງປວງໃຫ້ເຊື່ອໃນຂອງປະທານແຫ່ງການເວົ້າພາສາ, **ອມນ** 1:25.

ມັນຖືກມອບໃຫ້ແກ່ບາງຄົນເພື່ອເວົ້າພາສາຕ່າງໆ; ແລະ ແກ່ອີກຄົນໜຶ່ງ ເພື່ອແປພາສາຕ່າງໆ, **ຄພ** 46:24–25 (1 ກຣທ 12:10; ມຣນ 10:8, 15–16). ຂໍ້ຈິ່ງຖອກເທຂອງປະທານແຫ່ງການເວົ້າພາສາລົງມາ, **ຄພ** 109:36.

**ການແຕ່ງຕັ້ງຂອງຖານະປະໂລຫິດ.** *ເບິ່ງ* ແຕ່ງຕັ້ງ, ການແຕ່ງຕັ້ງ

**ການແຕ່ງງານໃນພຣະວິຫານ.** *ເບິ່ງ* ແຕ່ງງານ, ການແຕ່ງງານ

**ການແປຂອງໂຈເຊັບ ສະມິດ (ປຈສ).** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ການດັດແປງ ຫລື ການແປພຣະຄຣິສຕະທຳຄຳພີຂອງກະສັດເຈມສ໌ ສະບັບເປັນພາສາອັງກິດ, ຊຶ່ງ ສາດສະດາໂຈເຊັບ ສະມິດ ໄດ້ເລີ່ມຕົ້ນໃນເດືອນມິຖຸນາ ປີ 1830. ພຣະເຈົ້າໄດ້ບັນຊາເພິ່ນໃຫ້ແປ ແລະ ນັບຖືມັນວ່າເປັນການເອີ້ນຢ່າງໜຶ່ງຂອງເພິ່ນ ໃນຖານະທີ່ເປັນສາດສະດາ.

ເຖິງແມ່ນວ່າໂຈເຊັບໄດ້ສຳເລັດການແປເກືອບທັງໝົດເມື່ອເຖິງເດືອນກໍລະກົດ ປີ 1833, ແຕ່ເພິ່ນຍັງໄດ້ສືບຕໍ່ການແປຈົນເຖິງມື້ຕາຍຂອງເພິ່ນ ໃນປີ 1844 ໃນການແກ້ໄຂ ຂະນະທີ່ຕຽມການແປເພື່ອຈັດພິມ. ເຖິງແມ່ນວ່າເພິ່ນໄດ້ຈັດພິມພາກສ່ວນໜຶ່ງຂອງການແປຕອນເພິ່ນຍັງມີຊີວິດຢູ່, ແຕ່ຖ້າຫາກເພິ່ນມີຊີວິດຢູ່ຕໍ່ໄປເພິ່ນຄົງໄດ້ປັບແປງເພີ່ມເຕີມໝົດທັງເຫລັ້ມໃຫ້ສຳເລັດ. The Reorganized Church of Jesus Christ of Latter Day Saints ໄດ້ຈັດພິມສະບັບທຳອິດຂອງການແປທີ່ດົນໃຈຂອງໂຈເຊັບ ສະມິດ ໃນປີ 1867. ນັບແຕ່ນັ້ນມາ ເຂົາເຈົ້າກໍໄດ້ຈັດພິມຫລາຍເທື່ອຕື່ມອີກ.

ສາດສະດາໄດ້ຮຽນຮູ້ຫລາຍສິ່ງ ໃນລະຫວ່າງທີ່ດຳເນີນການແປ. ເພິ່ນໄດ້ຮັບຫລາຍພາກຂອງພຣະຄຳພີ ຄຳສອນ ແລະ ພັນທະສັນຍາ ກໍເພາະການແປວຽກງານນີ້ແຫລະ (ດັ່ງເຊັ່ນ ຄພ 76; 77; 91; ແລະ 132). ພ້ອມນີ້, ພຣະຜູ້ເປັນເຈົ້າຍັງໄດ້ໃຫ້ຄຳແນະນຳສະເພາະແກ່ໂຈເຊັບກ່ຽວກັບການແປ, ຊຶ່ງຖືກບັນທຶກໄວ້ຢູ່ໃນພຣະຄຳພີ ຄຳສອນ ແລະ ພັນທະສັນຍາ (ຄພ 37:1; 45:60–61; 76:15–18; 90:13; 91; 94:10; 104:58; 124:89). ໜັງສືໂມເຊ ແລະ ໂຈເຊັບ ສະມິດ—ມັດທາຍ, ຕອນນີ້ ມີບັນຈຸຢູ່ໃນພຣະຄຳພີ ໄຂ່ມຸກອັນລ້ຳຄ່າ, ຊຶ່ງເອົາມາຈາກການແປຂອງ ໂຈເຊັບ ສະມິດ ໂດຍກົງ.

ການແປຂອງໂຈເຊັບ ສະມິດ ໄດ້ນຳສິ່ງທີ່ແຈ່ມແຈ້ງ ແລະ ມີຄ່າກັບຄືນມາ ຊຶ່ງໄດ້ສູນເສຍໄປຈາກພຣະຄຣິສຕະທຳຄຳພີ (1 ນຟ 13). ເຖິງແມ່ນວ່າມັນບໍ່ໄດ້ເປັນພຣະຄຣິສຕະທຳຄຳພີທີ່ຮັບຮູ້ກັນເປັນທາງການຂອງສາດສະໜາຈັກ, ແຕ່ການແປນີ້ໄດ້ໃຫ້ຄວາມຮູ້ແຈ້ງຫລາຍຢ່າງທີ່ໜ້າສົນໃຈ ແລະ ມີຄ່າ ສຳລັບຄວາມເຂົ້າໃຈພຣະຄຣິສຕະທຳຄຳພີ. ມັນຍັງເປັນພະຍານເຖິງການເອີ້ນແຫ່ງສະຫວັນ ແລະ ການປະຕິບັດສາດສະໜາກິດຂອງສາດສະດາໂຈເຊັບ ສະມິດ ນຳອີກ.

**ການໄຖ່, ແຜນແຫ່ງ.** *ເບິ່ງ* ແຜນແຫ່ງການໄຖ່

**ການກະຈັດກະຈາຍຂອງຊາວອິດສະຣາເອນ.** *ເບິ່ງ* ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ

**ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.** *ເບິ່ງ* ໂກກ; ເຄື່ອງໝາຍແຫ່ງການເວລາ; ພຣະເຢຊູຄຣິດ; ມາໂກກ; ອາມາເຄໂດນ *ນຳອີກ*

ໃນຕອນຕົ້ນຂອງສະໄໝພັນປີ, ພຣະຄຣິດຈະສະເດັດກັບຄືນມາສູ່ແຜ່ນດິນໂລກ. ເຫດການນີ້ ຈະເປັນຈຸດຈົບຂອງຄວາມເປັນມະຕະ

ແຫ່ງການທຳລາຍຂອງແຜ່ນດິນໂລກນີ້. ຄົນຊົ່ວຈະຖືກເອົາອອກໄປຈາກແຜ່ນດິນໂລກ ແລະ ຄົນຊອບທຳ ຈະຖືກຍົກຂຶ້ນສູ່ເມກ ໃນຂະນະທີ່ແຜ່ນດິນໂລກຖືກຊຳລະລ້າງ. ເຖິງແມ່ນວ່າຜູ້ຄົນບໍ່ຮູ້ວ່າພຣະຄຣິດຈະສະເດັດມາເມື່ອໃດ ໃນຄັ້ງທີສອງ, ແຕ່ພຣະອົງໄດ້ບອກເຖິງເຄື່ອງໝາຍທີ່ຈະເກີດຂຶ້ນກ່ອນວັນນັ້ນໃກ້ຈະມາເຖິງ (ມທ 24; ຈສ—ມ 1).

ຂ້ອຍຮູ້ຜູ້ໜຶ່ງຢູ່ໃນສະຫວັນ ຜູ້ທີ່ຈະມາໃນທີ່ສຸດ, **ໂຢບ** 19:25. ທຸກຄົນຈະມາກົ້ມສາບານສັດຊື່ຕໍ່ເຮົາ, **ອຊຢ** 45:23 (ຄພ 88:104). ຜູ້ໜຶ່ງມີຮູບຮ່າງເໝືອນມະນຸດໄດ້ມາ ໂດຍມີເມກອ້ອມຮອບເພິ່ນໄວ້, **ດນອ** 7:13 (ມທ 26:64; ລກ 21:25–28). ພວກເຂົາຈະແນມເບິ່ງຜູ້ທີ່ພວກເຂົາແທງຈົນຕາຍ, **ຊກຢ** 12:10. ມີຄົນຖາມວ່າ, ບາດແຜຫຍັງທີ່ມືຂອງເຈົ້າ, **ຊກຢ** 13:6 (ຄພ 45:51). ຜູ້ໃດແດ່ຈະສາມາດທົນຕໍ່ວັນທີ່ພຣະອົງສະເດັດມາ? ເພາະພຣະອົງຈະເປັນດັ່ງໄຟທີ່ຫລອມໂລຫະ, **ມລກ** 3:2 (3 ນຟ 24:2; ຄພ 128:24).

ບຸດມະນຸດຈະມາປະກົດດ້ວຍສະຫງ່າລາສີແຫ່ງພຣະບິດາຂອງພຣະອົງ, **ມທ** 16:27 (ມທ 25:31). ບໍ່ມີຜູ້ໃດຮູ້ວ່າວັນ ຫລື ໂມງນັ້ນຈະມາເຖິງເມື່ອໃດ ມີແຕ່ພຣະບິດາຂອງເຮົາເທົ່ານັ້ນຮູ້, **ມທ** 24:36 (ຄພ 49:7; ຈສ—ມ 1:38–48). ພຣະເຢຊູເຈົ້າອົງນີ້ຈະມາປະກົດຢ່າງທີ່ພວກເຈົ້າໄດ້ເຫັນພຣະອົງຂຶ້ນສູ່ສະຫວັນນັ້ນແຫລະ, **ກຈກ** 1:11. ພຣະຜູ້ເປັນເຈົ້າເອງຈະສະເດັດລົງມາຈາກສະຫວັນ, **1 ທສນ** 4:16. ວັນຂອງພຣະຜູ້ເປັນເຈົ້າ ຈະມາເຖິງເໝືອນດັ່ງຂະໂມຍມາໃນຕອນກາງຄືນ, **2 ປຕ** 3:10. ພຣະຜູ້ເປັນເຈົ້າຈະສະເດັດມາ ພ້ອມເຫລົ່າທູດຂອງພຣະອົງນັບເປັນໝື່ນໆ, **ຢດ** 1:14. ພຣະອົງຈະສະເດັດມາ ມີເມກເປັນຂະບວນແຫ່; ແລະ ຕາທຸກໜ່ວຍຈະເຫັນພຣະອົງ, **ພນມ** 1:7.

ພຣະເຢຊູຈະຢືນຂຶ້ນເພື່ອພິພາກສາໂລກ, **3 ນຟ** 27:14–18.

ຈົ່ງຕຽມ, ຈົ່ງຕຽມ, ເພາະພຣະຜູ້ເປັນເຈົ້າໃກ້ຈະມາແລ້ວ, **ຄພ** 1:12. ເຮົາຈະເປີດເຜີຍຕົວເຮົາຈາກສະຫວັນ ດ້ວຍອຳນາດ, ແລະ ດຳລົງຢູ່ເທິງແຜ່ນດິນໂລກເປັນເວລາພັນປີ, **ຄພ** 29:9–12. ຈົ່ງເປັ່ງສຽງຂອງເຈົ້າ ແລະ ເອີ້ນການກັບໃຈ, ຕຽມທາງຂອງພຣະຜູ້ເປັນເຈົ້າສຳລັບການສະເດັດມາຄັ້ງທີສອງຂອງພຣະອົງ, **ຄພ** 34:5–12. ເຮົາຄືພຣະເຢຊູຄຣິດ, ແລະ ເຮົາຈະມາຫາພຣະວິຫານຂອງເຮົາໂດຍໃນທັນໃດນັ້ນ, **ຄພ** 36:8 (ຄພ 133:2). ວັນນັ້ນຈະມາເຖິງໃນບໍ່ດົນນີ້ທີ່ພວກເຈົ້າຈະໄດ້ເຫັນເຮົາ, ແລະ ຮູ້ວ່າເຮົາດຳລົງຢູ່, **ຄພ** 38:8. ຄົນທີ່ຢ້ານກົວເຮົາຈະເຝົ້າຄອຍເຄື່ອງໝາຍແຫ່ງການມາຂອງບຸດມະນຸດ, **ຄພ** 45:39. ພຣະຜູ້ເປັນເຈົ້າຈະເປີດພຣະພັກຂອງພຣະອົງ, **ຄພ** 88:95. ມື້ອັນຍິ່ງໃຫຍ່ ແລະ ໜ້າຢ້ານກົວຂອງພຣະຜູ້ເປັນເຈົ້າ ຢູ່ໃກ້, **ຄພ** 110:16. ເມື່ອພຣະຜູ້ຊ່ວຍໃຫ້ລອດຈະມາປະກົດ ພວກເຮົາຈະເຫັນພຣະອົງ ດັ່ງທີ່ພຣະອົງເປັນຢູ່, **ຄພ** 130:1. ພຣະຜູ້ຊ່ວຍໃຫ້ລອດ ຈະປະທັບຢືນຢູ່ໃນທ່າມກາງຜູ້ຄົນຂອງພຣະອົງ ແລະ ຈະປົກຄອງ, **ຄພ** 133:25. ນີ້ແມ່ນໃຜຜູ້ທີ່ລົງມາຈາກພຣະເຈົ້າໃນສະຫວັນດ້ວຍອາພອນຍ້ອມສີ, **ຄພ** 133:46 (ອຊຢ 63:1).

**ການສະເດັດຂຶ້ນສະຫວັນ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ພຣະເຢຊູຄຣິດ *ນຳອີກ*

ການຈາກໄປເປັນທາງການຂອງພຣະຜູ້ຊ່ວຍໃຫ້ລອດຈາກແຜ່ນດິນໂລກ, ສີ່ສິບມື້ຫລັງຈາກການຟື້ນຄືນພຣະຊົນຂອງພຣະອົງ. ການສະເດັດຂຶ້ນສະຫວັນໄດ້ເກີດຂຶ້ນຢູ່ເທິງພູໝາກກອກເທດ ຢູ່ຕໍ່ໜ້າຂອງບັນດາສານຸສິດ (ມຣກ 16:19; ລກ 24:51). ໃນເວລານັ້ນ ທູດສອງອົງຈາກສະຫວັນໄດ້ເປັນພະຍານວ່າ ພຣະຜູ້ເປັນເຈົ້າຈະສະເດັດກັບມາໃນອະນາຄົດ "ຢ່າງທີ່ໄດ້ເຫັນ" (ກຈກ 1:9–12).

**ການຕາຍທາງວິນຍານ.** *ເບິ່ງ* ຄວາມຕາຍທາງວິນຍານ

**ການປ່ຽນສະພາບ.** *ເບິ່ງ* ຂໍກະແຈຂອງຖານະປະໂລຫິດ; ພຣະເຢຊູຄຣິດ *ນຳອີກ*

ສະພາບຂອງຜູ້ຄົນທີ່ປ່ຽນແປງຊົ່ວໄລຍະ

ໜຶ່ງ ໃນການປະກົດຕົວ ແລະ ໃນທຳມະຊາດ—ນັ້ນຄື, ຖືກຍົກຂຶ້ນສູງກວ່າທາງ ລະດັບ ວິນຍານ—ເພື່ອວ່າເຂົາເຈົ້າຈະສາມາດທົນຕໍ່ການປະທັບຢູ່ ແລະ ລັດສະໝີພາບຂອງບຸກຄົນຈາກສະຫວັນໄດ້.

*ການປ່ຽນສະພາບຂອງພຣະຄຣິດ:* ເປໂຕ, ຢາໂກໂບ, ແລະ ໂຢຮັນ ໄດ້ເຫັນພຣະຜູ້ເປັນເຈົ້າທີ່ຮຸ່ງເຫລື້ອມ ແລະ ປ່ຽນສະພາບ ຢູ່ຕໍ່ໜ້າເຂົາເຈົ້າ. ພຣະຜູ້ຊ່ວຍໃຫ້ລອດເຄີຍໄດ້ສັນຍາວ່າ ເປໂຕຈະໄດ້ຮັບຂໍກະແຈຂອງອານາຈັກສະຫວັນ (ມທ 16:13–19; 17:1–9; ມຣກ 9:2–10; ລກ 9:28–36; 2 ປຕ 1:16–18). ໃນເຫດການທີ່ສຳຄັນນີ້, ພຣະຜູ້ຊ່ວຍໃຫ້ລອດ, ໂມເຊ, ແລະ ອີລາຍ (ເອລີຢາ) ໄດ້ມອບຂໍກະແຈຂອງຖານະປະໂລຫິດທີ່ໄດ້ສັນຍາໄວ້ໃຫ້ແກ່ ເປໂຕ, ຢາໂກໂບ, ແລະ ໂຢຮັນ. ດ້ວຍຂໍກະແຈຂອງຖານະປະໂລຫິດເຫລົ່ານີ້, ອັກຄະສາວົກ ໄດ້ມີອຳນາດທີ່ຈະດຳເນີນວຽກງານຂອງອານາຈັກຕໍ່ໄປ ຫລັງຈາກການສະເດັດຂຶ້ນສະຫວັນຂອງພຣະເຢຊູ.

ໂຈເຊັບ ສະມິດ ໄດ້ສິດສອນວ່າ ຢູ່ເທິງພູແຫ່ງການປ່ຽນສະພາບ, ເປໂຕ, ຢາໂກໂບ, ແລະ ໂຢຮັນ ກໍໄດ້ປ່ຽນສະພາບ ເໝືອນກັນ. ເຂົາເຈົ້າໄດ້ເຫັນພາບນິມິດກ່ຽວກັບແຜ່ນດິນໂລກ ຕາມທີ່ມັນຈະເປັນ ໃນສະພາບທີ່ຮຸ່ງເຫລື້ອມຂອງມັນ ໃນອະນາຄົດ (ຄພ 63:20–21). ເຂົາເຈົ້າໄດ້ເຫັນໂມເຊ ແລະ ເອລີຢາ, ຊຶ່ງທັງສອງໄດ້ປ່ຽນສະພາບແລ້ວ, ແລະ ໄດ້ຍິນສຸລະສຽງຂອງພຣະບິດາ. ພຣະບິດາໄດ້ກ່າວວ່າ, "ນີ້ຄືບຸດທີ່ຮັກຂອງເຮົາ, ຜູ້ເຮົາພໍໃຈຫລາຍ; ຈົ່ງຟັງທ່ານ" (ມທ 17:5).

*ຜູ້ປ່ຽນສະພາບແລ້ວ:* ເຂົາເຈົ້າໄດ້ເຫັນພຣະເຈົ້າຂອງອິດສະຣາເອນ, **ອພຍ** 24:9–11. ໜ້າຂອງເພິ່ນສ່ອງແສງເຫລື້ອມ ໃນຂະນະທີ່ເພິ່ນໄດ້ກ່າວກັບພຣະເຈົ້າ, **ອພຍ** 34:29 (ມຣກ 9:2–3).

ພຣະພັກຂອງພຣະເຢຊູຜ່ອງເຫລື້ອມ, **ມທ** 17:2 (ມຣກ 9:2–3). ຊາວອິດສະຣາເອນເບິ່ງໜ້າຂອງໂມເຊບໍ່ໄດ້, **2 ກຣທ** 3:7.

ໃບໜ້າຂອງອະບີນາໄດສົ່ງແສງສະຫວ່າງອອກມາດ້ວຍລັດສະໝີພາບ, **ມຊຢ** 13:5–9. ເຂົາເຈົ້າໄດ້ຖືກອ້ອມໄວ້ຄືກັບວ່າດ້ວຍໄຟ, **ຮລມ** 5:23, 36, 43–45 (3 ນຟ 17:24; 19:14). ພວກເພິ່ນຂາວຄືກັນກັບພຣະພັກຂອງພຣະເຢຊູ, **3 ນຟ** 19:25. ພວກເພິ່ນໄດ້ຮູ້ສຶກເໝືອນເປັນການປ່ຽນສະພາບຂອງຕົນ, **3 ນຟ** 28:15.

ບໍ່ເຄີຍມີມະນຸດຄົນໃດເຄີຍເຫັນພຣະເຈົ້າໃນເນື້ອໜັງເລີຍ, ຍົກເວັ້ນແຕ່ໄດ້ຖືກເຮັດໃຫ້ມີຊີວິດຊີວາໂດຍພຣະວິນຍານ, **ຄພ** 67:10–12. ໂດຍອຳນາດຂອງພຣະວິນຍານ ຕາຂອງພວກເຮົາໄດ້ເປີດ, **ຄພ** 76:12.

ລັດສະໝີພາບຂອງພຣະເຈົ້າໄດ້ຢູ່ກັບໂມເຊ, **ມຊ** 1:2. ລັດສະໝີພາບຂອງພຣະອົງໄດ້ຢູ່ນຳຂ້າພະເຈົ້າ; ແລະ ຂ້າພະເຈົ້າໄດ້ເຫັນພຣະພັກຂອງພຣະອົງ, ເພາະວ່າຂ້າພະເຈົ້າໄດ້ຖືກປ່ຽນສະພາບ, **ມຊ** 1:11. ຂ້າພະເຈົ້າໄດ້ເຫັນຟ້າສະຫວັນເປີດ, ແລະ ຂ້າພະເຈົ້າໄດ້ຖືກຫຸ້ມຫໍ່ດ້ວຍລັດສະໝີພາບ, **ມຊ** 7:3–4.

**ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ.**
*ເບິ່ງ* ຄວາມຕາຍທາງຮ່າງກາຍ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ວິນຍານ; ອະມະຕະ, ຄວາມເປັນອະມະຕະ; ຮ່າງກາຍ
*ນຳອີກ*

ການລວມເຂົ້າກັນຂອງຮ່າງກາຍທີ່ເປັນວິນຍານ ແລະ ຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ ຫລັງຈາກຄວາມຕາຍ. ຫລັງຈາກການຟື້ນຄືນຊີວິດ, ວິນຍານ ແລະ ຮ່າງກາຍ ຈະບໍ່ມີວັນແຍກອອກຈາກກັນອີກ ແລະ ບຸກຄົນນັ້ນຈະກາຍເປັນອະມະຕະ. ທຸກຄົນທີ່ເກີດຢູ່ເທິງແຜ່ນດິນໂລກ ຈະຟື້ນຄືນຊີວິດ ເພາະພຣະເຢຊູຄຣິດໄດ້ເອົາຊະນະຄວາມຕາຍ (1 ກຣທ 15:20–22).

ພຣະເຢຊູຄຣິດເປັນຜູ້ທຳອິດທີ່ໄດ້ຟື້ນຄືນພຣະຊົນຢູ່ເທິງແຜ່ນດິນໂລກ (ກຈກ 26:23; ກລຊ 1:18; ພນມ 1:5). ພຣະຄຳພີໃໝ່ມີຫລັກຖານພຽງພໍ ວ່າພຣະເຢຊູໄດ້ລຸກຂຶ້ນດ້ວຍພຣະກາຍຂອງພຣະອົງ: ອຸບມຸງຂອງພຣະອົງເປົ່າວ່າງ, ພຣະອົງໄດ້ກິນປາ ແລະ ນ້ຳເຜິ້ງ, ພຣະອົງມີພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ, ຜູ້ຄົນໄດ້ຈັບບາຍພຣະອົງ, ແລະ ທູດໄດ້ກ່າວ

ວ່າ ພຣະອົງໄດ້ຟື້ນຄືນພຣະຊົນແລ້ວ (ມຣກ 16:1–6; ລກ 24:1–12, 36–43; ຢຣ 20:1–18). ການເປີດເຜີຍຍຸກສຸດທ້າຍຢືນຢັນຄວາມເປັນຈິງຂອງການຟື້ນຄືນພຣະຊົນຂອງພຣະຄຣິດ ແລະ ການຟື້ນຄືນຊີວິດຂອງມະນຸດຊາດທັງປວງ (ແອວ 11:40–45; 40; 3 ນຟ 11:1–17; ຄພ 76; ມຊ 7:62).

ທຸກຄົນຈະບໍ່ຟື້ນຄືນຊີວິດສູ່ລັດສະໝີພາບອັນດຽວກັນ (1 ກຣທ 15:39–42; ຄພ 76:89–98), ທັງທຸກຄົນຈະບໍ່ຟື້ນຄືນຊີວິດໃນເວລາດຽວກັນ (1 ກຣທ 15:22–23; ແອວ 40:8; ຄພ 76:64–65, 85; 88:96–102). ໄພ່ພົນຂອງພຣະເຈົ້າຢ່າງຫລວງຫລາຍໄດ້ຟື້ນຄືນຊີວິດຫລັງຈາກພຣະຄຣິດໄດ້ຟື້ນຄືນພຣະຊົນ (ມທ 27:52). ຄົນຊອບທຳຈະຟື້ນຄືນຊີວິດກ່ອນຄົນຊົ່ວ ແລະ ຈະອອກມາໃນການຟື້ນຄືນຊີວິດຄັ້ງທຳອິດ (1 ທສນ 4:16); ຄົນບາບທີ່ບໍ່ກັບໃຈຈະອອກມາໃນການຟື້ນຄືນຊີວິດຄັ້ງສຸດທ້າຍ (ພນມ 20:5–13; ຄພ 76:85).

ເຖິງແມ່ນວ່າເນື້ອກາຍຂ້ອຍຈະຖືກພະຍາດກັດກິນເມື່ອຍັງຢູ່ໃນຮ່າງກາຍ ຂ້ອຍຈະໄດ້ເຫັນພຣະເຈົ້າ, **ໂຢບ** 19:26 (ມຊ 5:10). ເຮົາຈະໄຂຫລຸມຝັງສົບຂອງພວກເຂົາອອກ, ແລະ ເອົາພວກເຂົາອອກມາ, **ອຊກ** 37:12.

ອຸບມຸງຝັງສົບທັງຫລາຍໄດ້ໄຂອອກ, ແລະ ຫລາຍ ຄົນ ກໍ ຄືນ ສູ່ຊີ ວິດ, **ມທ** 27:52–53 (3 ນຟ 23:9). ພຣະຜູ້ເປັນເຈົ້າເປັນຄືນມາ, **ລກ** 24:34. ວິນຍານບໍ່ມີເນື້ອໜັງ ບໍ່ມີກະດູກ, ດັ່ງທີ່ພວກເຈົ້າເຫັນເຮົາມີຢູ່ນີ້, **ລກ** 24:39. ເຮົານີ້ແຫລະເປັນເຫດໃຫ້ຄົນທັງປວງເປັນຄືນມາທັງເປັນຊີວິດ, **ຢຣ** 11:25. ອັກຄະສາວົກສິບສອງຄົນໄດ້ສິດສອນວ່າ ພຣະເຢຊູໄດ້ຟື້ນຄືນພຣະຊົນແລ້ວ, **ກຈກ** 1:21–22 (ກຈກ 2:32; 3:15; 4:33). ທຸກຄົນໄດ້ຖືກເຮັດໃຫ້ມີຊີວິດໃນພຣະຄຣິດ, **1 ກຣທ** 15:1–22. ຄົນທີ່ຕາຍໃນພຣະຄຣິດ ຈະເປັນຄືນມາສູ່ຊີວິດກ່ອນ, **1 ທສນ** 4:16. ຜູ້ໃດທີ່ມີສ່ວນໃນການຄືນມາຈາກຕາຍຄັ້ງທຳອິດ ກໍເປັນສຸກ ແລະ ບໍລິສຸດ, **ພນມ** 20:6.

ພຣະຄຣິດໄດ້ມອບພຣະຊົນຊີບຂອງພຣະອົງ ແລະ ໄດ້ຮັບເອົາມັນຄືນ ເພື່ອພຣະອົງຈະໄດ້ເຮັດໃຫ້ເກີດການຟື້ນຄືນຊີວິດຂອງຄົນຕາຍ, **2 ນຟ** 2:8 (ມຊຢ 13:35; 15:20; ແອວ 33:22; 40:3; ຮລມ 14:15). ປາດສະຈາກການຟື້ນຄືນພຣະຊົນ, ເຮົາຕ້ອງຂຶ້ນຢູ່ກັບຊາຕານ, **2 ນຟ** 9:6–9. ການຟື້ນຄືນຊີວິດຈະເກີດກັບມະນຸດທຸກຄົນ, **2 ນຟ** 9:22. ອະບີນາໄດໄດ້ສິດສອນກ່ຽວກັບການຟື້ນຄືນຊີວິດຄັ້ງທຳອິດ, **ມຊຢ** 15:21–26. ຄົນຊົ່ວຈຶ່ງຄົງຢູ່ເໝືອນກັບວ່າບໍ່ມີການໄຖ່ເກີດຂຶ້ນເລີຍ, ເວັ້ນເສຍແຕ່ຈະເປັນການແກ້ສາຍຮັດແຫ່ງຄວາມຕາຍອອກ, **ແອວ** 11:41–45. ແອວມາໄດ້ອະທິບາຍກ່ຽວກັບສະພາບຂອງຈິດວິນຍານລະຫວ່າງການຕາຍກັບການຟື້ນຄືນຊີວິດ, **ແອວ** 40:6, 11–24.

ໃນການສະເດັດມາຂອງພຣະຜູ້ເປັນເຈົ້າ, ຄົນທີ່ຕາຍໃນພຣະຄຣິດຈະອອກມາ, **ຄພ** 29:13 (ຄພ 45:45–46; 88:97–98; 133:56). ຈົ່ງຮ້ອງໄຫ້ ໂດຍສະເພາະ ເພື່ອຄົນທີ່ບໍ່ມີຄວາມຫວັງແຫ່ງການຟື້ນຄືນຊີວິດອັນຮຸ່ງເຫລື້ອມ, **ຄພ** 42:45. ຄົນທີ່ບໍ່ຮູ້ກົດ ຈະມີສ່ວນໃນການຟື້ນຄືນຊີວິດຄັ້ງທຳອິດ, **ຄພ** 45:54. ເຂົາເຈົ້າຈະລຸກຂຶ້ນຈາກຄວາມຕາຍ ແລະ ຈະບໍ່ຕາຍຫລັງຈາກນັ້ນ, **ຄພ** 63:49. ການຟື້ນຄືນຊີວິດຈາກບັນດາຄົນຕາຍຄືການໄຖ່ຈິດວິນຍານ, **ຄພ** 88:14–16. ວິນຍານກັບທາດ, ສຳພັນກັນຢ່າງແຍກບໍ່ໄດ້, ຈະໄດ້ຮັບຄວາມສົມບູນແຫ່ງຄວາມຊື່ນຊົມ, **ຄພ** 93:33. ທູດຜູ້ທີ່ໄດ້ຟື້ນຄືນຊີວິດແລ້ວ ມີຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ, **ຄພ** 129:1. ຄວາມຮູ້ແຈ້ງໃດກໍຕາມທີ່ພວກເຮົາໄດ້ຮັບໃນຊີວິດນີ້ ມັນຈະລຸກຂຶ້ນກັບພວກເຮົາໃນການຟື້ນຄືນຊີວິດ, **ຄພ** 130:18–19.

**ການວາງມື.** *ເບິ່ງ* ມື, ການວາງ

**ການແຕ່ງເມຍຫລາຍຄົນ.** *ເບິ່ງ* ແຕ່ງງານ, ການແຕ່ງງານ—ການມີເມຍຫລາຍຄົນ

**ການຫລອກລວງຂອງປະໂລຫິດ**

ມະນຸດສັ່ງສອນ ແລະ ຕັ້ງຕົນເອງຂຶ້ນເປັນຄວາມສະຫວ່າງໃຫ້ໂລກ ເພື່ອພວກເຂົາຈະໄດ້ຫາຜົນປະໂຫຍດ ແລະ ຄຳສັນລະເສີນຂອງ

ທາງ ໂລກ; ແຕ່ ພວກ ເຂົາ ບໍ່ ໄດ້ ສະແຫວງ ຫາ ເພື່ອຄວາມຜາສຸກຂອງຊີໂອນ (2 ນຟ 26:29).

ຈົ່ງລ້ຽງຝູງແກະ ທີ່ພຣະເຈົ້າໄດ້ຝາກໄວ້ກັບພວກ ເຈົ້າ, ບໍ່ແມ່ນເພື່ອເຫັນແກ່ຄ່າຈ້າງລາງວັນ, **1 ປຕ** 5:2.

ເມື່ອສາດສະໜາຈັກທີ່ສ້າງຂຶ້ນເພື່ອຫາຜົນປະໂລຫິດ ພວກເຂົາຈະຕ້ອງຖືກນຳລົງຕ່ຳ, **1 ນຟ** 22:23 (ມມ 8:32–41). ເພາະການຫລອກລວງຂອງປະໂລຫິດ ແລະ ຄວາມຊົ່ວຮ້າຍ, ພຣະເຢຊູຈະຖືກຄຶງ, **2 ນຟ** 10:5. ການຫລອກລວງຂອງປະໂລຫິດຖືກບັງຄັບໃຊ້ໃນບັນດາຜູ້ຄົນແລ້ວ ກໍໝາຍຄວາມວ່າ ຄວາມພິນາດທັງໝົດກໍຈະເກີດຂຶ້ນ ແກ່ພວກເຂົາ, **ແອວ** 1:12. ຄົນຕ່າງຊາດຈະເຕັມໄປດ້ວຍການຫລອກລວງຂອງປະໂລຫິດນາໆປະການ, **3 ນຟ** 16:10.

**ກາຢະຟາ.** *ເບິ່ງ* ຊາດູກາຍ; ອັນນາ *ບຳອິກ*

ໃນພຣະຄຳພີໃໝ່, ມະຫາປະໂລຫິດ ແລະ ລູກເຂີຍຂອງອັນນາ. ກາຢະຟາເປັນຜູ້ໜຶ່ງທີ່ຕໍ່ຕ້ານພຣະເຢຊູ ແລະ ສານຸສິດຂອງພຣະອົງຫລາຍທີ່ສຸດ (ມທ 26:3–4; ຢຮ 11:47–51; 18:13–14).

**ກາມາລິເອນ.** *ເບິ່ງ* ຟາຣິຊາຍ *ບຳອິກ*

ຟາຣິຊາຍຄົນໜຶ່ງທີ່ຜູ້ຄົນຮູ້ຈັກກັນດີໃນພຣະຄຳພີໃໝ່ ຜູ້ຮູ້ຈັກ ແລະ ໄດ້ສິດສອນກົດຂອງຊາວຢິວ. ອັກຄະສາວົກ ໂປໂລເປັນນັກຮຽນຄົນໜຶ່ງຂອງລາວ (ກຈກ 22:3). ລາວເປັນຄົນໜຶ່ງທີ່ມີອິດທິພົນຫລາຍຢູ່ໃນສານຊານເຮດຣິນ (ກຈກ 5:34–40).

**ການມະລົນ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ມະນຸດທີ່ມີຈິດໃຈທຳມະດາ *ບຳອິກ*

ບາງສິ່ງທີ່ບໍ່ແມ່ນທາງວິນຍານ; ໂດຍສະເພາະແລ້ວ ຄຳນີ້ອາດຖືກໃຊ້ເພື່ອໝາຍເຖິງສິ່ງທີ່ເປັນມະຕະ ແລະ ທາງຝ່າຍໂລກ (ຄພ 67:10) ຫລື ທາງໂລກ, ທາງເນື້ອໜັງ, ແລະ ຕັນຫາໜ້າມືດ (ມຊຢ 16:10–12).

ການມີຈິດໃຈທີ່ເຕັມໄປດ້ວຍຕັນຫາຄືຄວາມຕາຍ, **2 ນຟ** 9:39. ມານກ່ອມມະນຸດໄປໃນຄວາມໝັ້ນຄົງທີ່ເຕັມໄປດ້ວຍການມະລົນ, **2 ນຟ** 28:21. ພວກເຂົາເຫັນຕົວເອງຢູ່ໃນສະພາບແຫ່ງການມະລົນ, **ມຊຢ** 4:2. ຜູ້ໃດທີ່ຍັງຄົງຢູ່ໃນສະພາບແຫ່ງການມະລົນຂອງຕົນເອງ ຈະຍັງຄົງຢູ່ໃນສະພາບຕົກຕ່ຳຂອງຕົນ, **ມຊຢ** 16:5. ທຸກຜູ້ຄົນທັງປວງຕ້ອງເກີດຈາກພຣະເຈົ້າ, ປ່ຽນຈາກສະພາບແຫ່ງການມະລົນ ແລະ ຕົກຕ່ຳຂອງພວກເຂົາ, **ມຊຢ** 27:25. ມະນຸດຊາດກາຍເປັນຄົນມີການມະລົນ, ຕັນຫາໜ້າມືດ, ແລະ ຕ່ຳຊ້າ, **ແອວ** 42:10.

ຜູ້ທີ່ເຮັດຕາມຄວາມປະສົງ ແລະ ຄວາມປາດຖະໜາອັນເປັນຕັນຫາຂອງຕົນ, ເຂົາຈະຕົກໄປ, **ຄພ** 3:4. ມະນຸດບໍ່ສາມາດເຫັນພຣະເຈົ້າດ້ວຍຈິດໃຈແຫ່ງການມະລົນ, **ຄພ** 67:10–12.

ມະນຸດໄດ້ເລີ່ມມີການມະລົນ, ຕັນຫາໜ້າມືດ, ແລະ ຕ່ຳຊ້າ, **ມຊ** 5:13; 6:49.

**ກ່າວໂທດ, ການກ່າວໂທດ.** *ເບິ່ງ* ພິພາກສາ, ການພິພາກສາ, ຜູ້ພິພາກສາ; ພິພາກສາ, ການພິພາກສາຄັ້ງສຸດທ້າຍ *ບຳອິກ*

ທີ່ຈະຕັດສິນ ຫລື ຖືກຕັດສິນວ່າມີຄວາມຜິດໂດຍພຣະເຈົ້າ.

ພຣະເຈົ້າຈະກ່າວໂທດຄົນທີ່ວາງແຜນອັນຊົ່ວຮ້າຍ, **ສພສ** 12:2.

ພຣະຜູ້ເປັນເຈົ້າຕີສອນພວກເຮົາ ເພື່ອບໍ່ໃຫ້ພວກເຮົາຖືກພິພາກສາລົງໂທດດ້ວຍກັນກັບໂລກ, **1 ກຣທ** 11:32.

ຄຳເວົ້າ, ການກະທຳ, ແລະ ຄວາມຄິດຂອງເຮົາຈະກ່າວໂທດເຮົາ, **ແອວ** 12:14. ເມື່ອຮູ້ຈັກເລື່ອງເຫລົ່ານີ້ແລ້ວ ແຕ່ບໍ່ປະຕິບັດຕາມ, ມະນຸດຈະປ່ອຍໃຫ້ຕົນເອງມາຢູ່ພາຍໃຕ້ການກ່າວໂທດ, **ຮລມ** 14:19. ຖ້າຫາກພວກເຮົາຢຸດທຳງານ, ພວກເຮົາກໍຈະຖືກນຳໄປຢູ່ພາຍໃຕ້ການກ່າວໂທດ, **ມຣນ** 9:6.

ຄົນທີ່ບໍ່ໃຫ້ອະໄພຄວາມຜິດແກ່ພີ່ນ້ອງຂອງຕົນ ຈະຖືກກ່າວໂທດຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, **ຄພ** 64:9. ຄົນໃດທີ່ເຮັດບາບຕໍ່ຄວາມສະຫວ່າງຫລາຍ ກໍຈະຖືກກ່າວໂທດ

ຫລາຍ, **ຄພ** 82:3. ທັງສາດສະໜາຈັກມາຢູ່ພາຍໃຕ້ການກ່າວໂທດຈົນກວ່າເຂົາຈະກັບໃຈ ແລະ ຈື່ຈຳພຣະຄຳພີມໍມອນ, **ຄພ** 84:54–57.

**ກ້າຫານ, ຄວາມກ້າຫານ, ຢ່າງກ້າຫານ.** *ເບິ່ງ* ສັດທາ; ຢ້ານກົວ, ຄວາມຢ້ານກົວ *ນຳອີກ*

ເປັນການບໍ່ຢ້ານ, ໂດຍສະເພາະການເຮັດສິ່ງທີ່ຖືກຕ້ອງ.

ຈົ່ງ ເດັດ ດ່ຽວ ແລະ ກ້າຫານ, **ພບຍ** 31:6 (ຢຊ 1:6–7). ຈົ່ງຕັ້ງໃຈເຊື່ອຟັງ ແລະ ປະຕິບັດຕາມທຸກໆສິ່ງທີ່ໄດ້ມີຂຽນໄວ້, **ຢຊ** 23:6.

ພຣະເຈົ້າບໍ່ໄດ້ປະທານໃຈອັນຢ້ານກົວໃຫ້ແກ່ເຮົາ, **2 ຕມທ** 1:7.

ໃຈຂອງລາວເລີ່ມມີກຳລັງຂຶ້ນເວລາລາວໄດ້ຍິນ, **ແອວ** 15:4 (ແອວ 62:1). ພວກລູກຊາຍຂອງຮີລາມັນເປັນຄົນກ້າຫານທີ່ສຸດ, **ແອວ** 53:20–21. ຂ້າພະເຈົ້າບໍ່ເຄີຍເຫັນຄວາມກ້າຫານແບບນີ້ມາກ່ອນເລີຍ, **ແອວ** 56:45.

ຈົ່ງກ້າຫານ, ອ້າຍເອື້ອຍນ້ອງທັງຫລາຍ, ແລະ ກ້າວຕໍ່ໄປ, ຕໍ່ໄປເຖິງໄຊຊະນະ, **ຄພ** 128:22.

**ກາເຫລັບ**

ຄົນໜຶ່ງໃນຈຳນວນຜູ້ຄົນທີ່ໂມເຊໄດ້ສົ່ງໄປຊອກຫາແຜ່ນດິນການາອານ ໃນປີທີສອງຫລັງຈາກການອົບພະຍົບ. ລາວ ແລະ ໂຢຊວຍສອງຄົນເທົ່ານັ້ນທີ່ໄດ້ກັບຄືນມາລາຍງານຄວາມຈິງກ່ຽວກັບແຜ່ນດິນ (ຈບຊ 13:6, 30; 14:6–38). ເຂົາເຈົ້າສອງຄົນເທົ່ານັ້ນໃນບັນດາຜູ້ຄົນທັງໝົດທີ່ໄດ້ໜີຈາກເອຢິບ ລອດຊີວິດໃນຖິ່ນແຫ້ງແລ້ງກັນດານຫລັງຈາກ 40 ປີ (ຈບຊ 26:65; 32:12; ພບຍ 1:36) ແລະ ໄດ້ເຂົ້າໄປໃນການາອານ (ຢຊ 14:6–14; 15:13–19).

**ກາອິນ.** *ເບິ່ງ* ການມົ້ວສຸມລັບ; ຄາດຕະກຳ, ການຄາດຕະກຳ; ອາດາມ; ອາເບັນ *ນຳອີກ*

ລູກຊາຍຂອງອາດາມ ແລະ ເອວາ ຜູ້ໄດ້ຂ້ານ້ອງຊາຍຂອງຕົນຊື່ ອາເບັນ (ປຖກ 4:1–16).

ສິ່ງທີ່ລາວຖວາຍຖືກພຣະຜູ້ເປັນເຈົ້າປະຕິເສດ, **ປຖກ** 4:3–7 (ມຊ 5:5–8, 18–26). ໄດ້ຂ້ານ້ອງຊາຍຂອງລາວຊື່ ອາເບັນ, **ປຖກ** 4:8–14 (ມຊ 5:32–37). ພຣະຜູ້ເປັນເຈົ້າໄດ້ສາບແຊ່ງລາວ ແລະ ໄດ້ເຮັດເຄື່ອງໝາຍໄວ້ໃນຕົວຂອງລາວ, **ປຖກ** 4:15 (ມຊ 5:37–41).

ອາດາມ ແລະ ເອວາໄດ້ມີລູກຊາຍ ແລະ ລູກສາວຫລາຍຄົນກ່ອນລາວໄດ້ເກີດມາ, **ມຊ** 5:1–3, 16–17. ຮັກຊາຕານຫລາຍກວ່າພຣະເຈົ້າ, **ມຊ** 5:13, 18. ໄດ້ເຂົ້າເຮັດພັນທະສັນຍາທີ່ບໍ່ດີກັບຊາຕານ, **ມຊ** 5:29–31.

**ກິດຈະການຂອງອັກຄະສາວົກ.** *ເບິ່ງ* ລູກາ *ນຳອີກ*

ໜັງສືເຫລັ້ມນີ້ແມ່ນພາກທີສອງຂອງການຂຽນໃນສອງພາກ ຊຶ່ງລູກາໄດ້ຂຽນເຖິງເທໂອຟີໂລ. ພາກທຳອິດຖືກເອີ້ນວ່າ ຂ່າວປະເສີດຕາມລູກາ. ບົດທີ 1–12 ບັນທຶກກິດຈະກຳຂອງການສອນສາດສະໜາທີ່ສຳຄັນບາງຢ່າງຂອງອັກຄະສາວົກສິບສອງ ພາຍໃຕ້ການຊີ້ນຳຂອງເປໂຕທັນທີຫລັງຈາກການສິ້ນພຣະຊົນຂອງພຣະຜູ້ຊ່ວຍໃຫ້ລອດ ແລະ ການຟື້ນຄືນພຣະຊົນ. ບົດທີ 13–28 ໃຫ້ໂຄງຮ່າງກ່ຽວກັບການເດີນທາງຈຳນວນໜຶ່ງຂອງອັກຄະສາວົກໂປໂລ ແລະ ວຽກງານເຜີຍແຜ່.

**ກິເລດຕັນຫາ.** *ເບິ່ງ* ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ *ນຳອີກ*

ມີຄວາມປາດຖະໜາຢ່າງແຮງກັບບາງສິ່ງໃນທາງທີ່ບໍ່ຖືກບໍ່ຄວນ.

ຢ່າໃຫ້ຄວາມງາມຂອງນາງເປັນທີ່ຍົວະເຍົ້າໃຈເຈົ້າໄດ້, **ສພສ** 6:25.

ຜູ້ໃດແນມເບິ່ງຜູ້ຍິງດ້ວຍໃຈຄິດຢາກໄດ້ຍິງນັ້ນ ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ, **ມທ** 5:28 (3 ນຟ 12:28). ພວກຜູ້ຊາຍເຕັມໄປດ້ວຍໄຟແຫ່ງກິເລດຕັນຫາຕໍ່ກັນ, **ຣມ** 1:27. ຈະຮວບຮວມຄຳສອນໄວ້ສຳລັບເພື່ອຕອບສະໜອງຄວາມຕ້ອງການຂອງເຂົາ, **2 ຕມທ** 4:3–4.

ລາບານເຫັນຊັບສົມບັດຂອງພວກເຮົາ ແລະ ມີຄວາມໂລບມາກຢາກໄດ້ມັນ, **1 ນຟ** 3:25. ບໍ່ຫລົງໄຫລ ແລະ ໄຝ່ຝັນຢູ່ກັບສິ່ງທີ່ເຫັນໄດ້, **ແອວ** 39:3–4, 9.

ຄົນທີ່ຫລຽວເບິ່ງຜູ້ຍິງດ້ວຍຄວາມໄຄ່ໃນ

ບາງ ຈະປະຕິເສດຄວາມເຊື່ອ, **ຄພ** 42:23. ຈົ່ງຢຸດຈາກຕັນຫາລາມົກທັງໝົດຂອງພວກເຈົ້າ, **ຄພ** 88:121.

**ກິ່ງງ່າຂອງຢູດາ.** *ເບິ່ງ* ຢູດາ (ລູກຊາຍຂອງຢາໂຄບ)—ກິ່ງງ່າຂອງຢູດາ

**ກິ່ງງ່າຂອງໂຢເຊັບ.** *ເບິ່ງ* ເອຟະຣາອິມ—ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ

**ກິ່ງງ່າຂອງເອຟະຣາອິມ.** *ເບິ່ງ* ເອຟະຣາອິມ—ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ

**ກີເດໂອນ (ພຣະຄຳພີມໍມອນ)**

ຜູ້ນຳຊາວນີໄຟທີ່ຊື່ສັດ.

ເປັນຊາຍທີ່ເຂັ້ມແຂງ ແລະ ເປັນສັດຕູຂອງກະສັດໂນອາ, **ມຊຢ** 19:4–8. ໄດ້ ແນະນຳກະສັດລິມໄຮ, **ມຊຢ** 20:17–22. ໄດ້ສະເໜີແຜນການທີ່ຈະປົບໜີຈາກຄວາມເປັນທາດຂອງຊາວເລມັນ, **ມຊຢ** 22:3–9. ຖືກນີຮໍຂ້າ, **ແອວ** 1:8–10.

**ກີເດໂອນ (ພຣະຄຳພີເດີມ)**

ຜູ້ນຳທີ່ໄດ້ປົດປ່ອຍອິດສະຣາເອນຈາກຊາວມີດີອານ (ຜປ 6:11–40; 7–8).

**ກຸງໂຣມ.** *ເບິ່ງ* ຈັກກະພັບໂຣມ *ນຳອີກ*

ໃນພຣະຄຳພີໃໝ່, ຕົວເມືອງຂອງຈັກກະພັບໂຣມ, ຕັ້ງຢູ່ແຄມແມ່ນ້ຳຕີເບ ໃນປະເທດອີຕາລີ (ກຈກ 18:2; 19:21; 23:11). ໂປໂລໄດ້ສອນພຣະກິດຕິຄຸນໃນກຸງໂຣມ ຕອນເພິ່ນເປັນນັກໂທດຂອງລັດຖະບານໂຣມ (ກຈກ 28:14–31; ໂຣມ 1:7, 15–16).

**ກຸ່ມ.** *ເບິ່ງ* ຖານະປະໂລຫິດ *ນຳອີກ*

ຄຳວ່າ ກຸ່ມ ສາມາດຖືກໃຊ້ໃນສອງວິທີທາງ: (1) ກຸ່ມໃດກຸ່ມໜຶ່ງໂດຍສະເພາະຂອງພວກຜູ້ຊາຍ ທີ່ມີຕຳແໜ່ງດຽວກັນໃນຖານະປະໂລຫິດ. (2) ຈຳນວນສະມາຊິກຫລາຍ ຫລື ໜ້ອຍໃນກຸ່ມຖານະປະໂລຫິດ ທີ່ຕ້ອງໄປຮ່ວມປະຊຸມ ເພື່ອດຳເນີນທຸລະກິດຂອງສາດສະໜາຈັກ (ຄພ 107:28).

ກຸ່ມຂອງຝ່າຍປະທານສູງສຸດ, ຫລື ອັກຄະສາວົກສິບສອງ, ແລະ ສາວົກເຈັດສິບ ແລະ ຄວາມສຳພັນຂອງພວກເພິ່ນທີ່ມີຕໍ່ກັນແລະກັນ ໄດ້ຖືກບັນຍາຍໄວ້, **ຄພ** 107:22–26, 33–34 (ຄພ 124:126–128). ການຕັດສິນຂອງກຸ່ມ ເຫລົ່ານີ້ຕ້ອງ ເປັນເອກະສັນ, **ຄພ** 107:27. ການຕັດສິນຂອງກຸ່ມຕ້ອງເຮັດໄປໃນຄວາມຊອບທຳ, **ຄພ** 107:30–32. ໜ້າທີ່ຂອງປະທານກຸ່ມຖານະປະໂລຫິດ ໄດ້ຖືກອະທິບາຍໄວ້, **ຄພ** 107:85–96. ກຸ່ມແອວເດີໄດ້ຖືກແຕ່ງຕັ້ງສຳລັບຜູ້ປະຕິບັດສາດສະໜາກິດປະຈຳ, **ຄພ** 124:137.

**ເກັບກ່ຽວ**

ບາງເທື່ອພຣະຄຳພີໃຊ້ຄຳວ່າ ເກັບກ່ຽວ ເປັນຄຳອຸປະມາທີ່ໝາຍເຖິງການນຳຜູ້ຄົນມາສູ່ສາດສະໜາຈັກ, ຊຶ່ງເປັນອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ, ຫລື ໃນເວລາແຫ່ງການພິພາກສາ, ດັ່ງເຊັ່ນການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.

ລະດູຮ້ອນຜ່ານພົ້ນ ລະດູເກັບກ່ຽວຈວນຈະໝົດ ແຕ່ໝູ່ເຮົາຍັງບໍ່ໄດ້ຖືກຊ່ວຍໃຫ້ພົ້ນ, **ຢມຢ** 8:20 (ຄພ 56:16).

ພືດຜົນທີ່ພໍເກັບກ່ຽວກໍຫລາຍແທ້, ແຕ່ຄົນງານຍັງມີໜ້ອຍຢູ່, **ມທ** 9:37. ລະດູເກັບກ່ຽວແມ່ນຄາວສິ້ນສຸດໂລກ, **ມທ** 13:39. ຜູ້ໃດຫວ່ານສິ່ງໃດລົງກໍຈະເກັບກ່ຽວສິ່ງນັ້ນ, **ຄລຕ** 6:7–9 (ຄພ 6:33).

ທົ່ງກໍຂາວພ້ອມແລ້ວທີ່ຈະເກັບກ່ຽວ, **ຄພ** 4:4. ການເກັບກ່ຽວສິ້ນສຸດລົງແລ້ວ ແລະ ຈິດວິນຍານຂອງເຈົ້າບໍ່ລອດ, **ຄພ** 45:2. ເວລາແຫ່ງການເກັບກ່ຽວມາເຖິງແລ້ວ, ແລະ ຄຳຂອງເຮົາຈຳເປັນຕ້ອງສຳເລັດຄົບຖ້ວນ, **ຄພ** 101:64.

**ແກ້ແຄ້ນ, ການແກ້ແຄ້ນ.** *ເບິ່ງ* ເປັນສັດຕູກັນ, ຄວາມເປັນສັດຕູກັນ *ນຳອີກ*

ການແກ້ແຄ້ນ ຫລື ການໂຕ້ຕອບ ສຳລັບຄວາມເຈັບປວດ ຫລື ການເຮັດໃຫ້ຜິດໃຈ.

ພຣະເຈົ້າຂອງເຈົ້າຈະມາພ້ອມດ້ວຍການແກ້ແຄ້ນ, **ອຊຢ** 35:4.

ການ ແກ້ ແຄ້ນ ເປັນ ທຸລະ ຂອງ ເຮົາ, **ຣມ** 12:19 (ມມ 3:15; 8:20).

ດາບ ແຫ່ງ ການ ແກ້ແຄ້ນ ແຂວນຢູ່ ເທິງຫົວ ທ່ານ, **ມມ** 8:40–41.

ເຮົາຈະແກ້ແຄ້ນຄົນຊົ່ວ, ເພາະເຂົາຈະບໍ່ກັບ ໃຈ, **ຄພ** 29:17.

ພຣະຜູ້ຊ່ວຍ ໃຫ້ລອດຈະມາ ໃນວັນເວລາ ຂອງຄວາມຊົ່ວຮ້າຍ ແລະ ການແກ້ແຄ້ນ, **ມຊ** 7:45–46.

**ກົງກັນຂ້າມ, ການກົງກັນຂ້າມ.** *ເບິ່ງ* ຍາກລຳບາກ, ຄວາມຍາກລຳບາກ

**ກົດ.** *ເບິ່ງ* ກົດຂອງໂມເຊ; ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ; ພຣະບັນຍັດຂອງພຣະເຈົ້າ; ພອນ, ໃຫ້ພອນ, ເປັນພອນ *ນຳອີກ*

ພຣະບັນຍັດ ຫລື ກົດ ຂອງພຣະເຈົ້າ ຊຶ່ງ ພອນ ແລະ ການລົງ ໂທດແມ່ນ ຂຶ້ນ ຢູ່ກັບ ສະຫວັນ ແລະ ແຜ່ນດິນໂລກ. ຜູ້ທີ່ເຊື່ອຟັງກົດ ຂອງພຣະເຈົ້າໄດ້ຮັບພອນທີ່ສັນຍາໄວ້. ສາດສະດາໂຈເຊັບ ສະມິດ ໄດ້ສອນວ່າ ຜູ້ຄົນຄວນ ເຊື່ອຟັງ, ໃຫ້ກຽດ, ແລະ ສະໜັບສະໜູນກົດ ຂອງແຜ່ນດິນນຳອີກ (ຫຼຊ 1:12).

ກົດ ຂອງ ໂມເຊ ເປັນກົດ ທີ່ຕຽມ ເພື່ອນຳ ຊາຍ ແລະ ຍິງມາສູ່ພຣະຄຣິດ. ມັນເປັນກົດ ສັ່ງຫ້າມ, ການສັ່ງ, ແລະ ພິທີການ. ໃນວັນ ເວລານີ້ກົດຂອງພຣະຄຣິດ, ຊຶ່ງເຮັດໃຫ້ກົດ ຂອງໂມເຊສຳເລັດຄົບຖ້ວນ, ເປັນຄວາມສົມ ບູນຂອງພຣະກິດຕິຄຸນ ຫລື "ກົດບັນຍັດອັນ ຄົບຖ້ວນຊຶ່ງເຮັດໃຫ້ມີອິດສະລະພາບ" (ຢກບ 1:25).

ພຣະ ເຈົ້າ ໄດ້ປະທານພຣະບັນຍັດໃຫ້ແກ່ ອາດາມ, **ປຖກ** 1:28; 2:16–17. ພຣະເຈົ້າໄດ້ ປະທານກົດໃຫ້ແກ່ໂນອາ, **ປຖກ** 9:1. ກົດຂອງ ພຣະຜູ້ເປັນເຈົ້າຄົບຖ້ວນ, ເປັນທີ່ເຊີດຊູໃຈໃຫ້ ມີແຮງຂຶ້ນໃໝ່, **ພສສ** 19:7. ພຣະຜູ້ເປັນເຈົ້າ ເປັນຜູ້ໃຫ້ກົດຂອງພວກເຮົາ, **ອຊຢ** 33:22.

ມີຜູ້ໃຫ້ກົດແຕ່ອົງດຽວເທົ່ານັ້ນແຫລະ, **ຢກບ** 4:12.

ບ່ອນໃດບໍ່ມີກົດໄວ້ໃຫ້ ຍ່ອມບໍ່ມີໂທດ, **2 ນຟ** 9:25. ມີກົດໃຫ້ໄວ້, **ແອວ** 42:17–22. ມະນຸດ ຈະຖືກພິພາກສາຕາມກົດ, **ແອວ** 42:23. ພຣະຄຣິດຄືກົດ, **3 ນຟ** 15:9.

ກົດ ທຸກປະການເປັນ ທາງ ຝ່າຍວິນ ຍານ, **ຄພ** 29:34. ໂຈເຊັບ ສະມິດ ໄດ້ຮັບກົດຂອງ ສາດສະໜາຈັກໂດຍການເປີດເຜີຍ, **ຄພ** 42. ຜູ້ທີ່ຮັກສາກົດຂອງພຣະເຈົ້າ ບໍ່ຈຳເປັນຕ້ອງ ຝ່າຝືນກົດໝາຍຂອງແຜ່ນດິນ, **ຄພ** 58:21. ຄວາມສະຫວ່າງຂອງພຣະຄຣິດເປັນກົດ ທີ່ ທຸກສິ່ງທັງປວງຖືກປົກຄອງ, **ຄພ** 88:7–13. ພຣະອົງໄດ້ປະທານກົດສຳລັບທຸກສິ່ງທັງປວງ, **ຄພ** 88:42–43. ຜູ້ຄົນຄວນຍຶດຖືກົດຂອງບ້ານ ເມືອງ, **ຄພ** 98:4–5. ເມື່ອພວກເຮົາໄດ້ຮັບ ພອນປະການໃດຈາກພຣະເຈົ້າ, ຍ່ອມເປັນໄປ ເພາະການເຊື່ອຟັງຕໍ່ກົດນັ້ນ, **ຄພ** 130:20–21. ສາດສະໜາຈັກໄດ້ປະກາດຄວາມເຊື່ອ ຂອງຕົນກ່ຽວກັບກົດໝາຍຂອງບ້ານເມືອງ, **ຄພ** 134.

ມະນຸດຊາດຈະລອດໄດ້ ໂດຍການປະຕິບັດ ຕາມກົດ ແລະ ພິທີການແຫ່ງພຣະກິດຕິຄຸນ, **ຫຼຊ** 1:3.

**ກົດຂອງໂມເຊ.** *ເບິ່ງ* ກົດ; ສະອາດ ແລະ ບໍ່ສະອາດ; ຖານະປະໂລຫິດແຫ່ງອາໂຣນ; ໂມເຊ *ນຳອີກ*

ພຣະ ເຈົ້າໄດ້ປະທານກົດຜ່ານທາງໂມເຊ ໃຫ້ ແກ່ ເຊື້ອສາຍ ອິດສະຣາເອນ ເພື່ອແທນ ກົດທີ່ສູງກວ່າ ອັນທີ່ພວກເຂົາບໍ່ສາມາດຮັກສາ (ອພຍ 34; ປຈສ, ອພຍ 34:1–2; ປຈສ, ພບຍ 10:2 [ພາກທ້ອຍທ້າຍ]). ກົດຂອງໂມເຊ ປະກອບດ້ວຍຫລັກທຳ, ຂໍ້ກຳນົດ, ພິທີການ, ພິທີ, ແລະ ເຄື່ອງໝາຍຫລາຍຢ່າງ ເພື່ອເຕືອນ ຜູ້ຄົນກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພວກເຂົາ. ມັນຍັງປະກອບດ້ວຍກົດກ່ຽວ ກັບສິນທຳ, ສາດສະໜາ, ແລະ ພຣະບັນຍັດ ແລະ ການປະຕິບັດທາງໂລກ—ລວມທັງການ ເສຍສະລະ (ລລວ 1–7)—ຊຶ່ງມີຈຸດເປົ້າໝາຍ ໃຫ້ເຕືອນພວກເຂົາກ່ຽວກັບພຣະເຈົ້າ ແລະ ໜ້າທີ່ຂອງພວກເຂົາຕໍ່ພຣະອົງ (ມຊຢ 13:30). ສັດທາ, ການກັບໃຈ, ການບັບຕິສະມາໃນນ້ຳ, ແລະ ການປົດບາບ ເປັນພາກສ່ວນຂອງກົດ, ເຊັ່ນດຽວກັບພຣະບັນຍັດສິບປະການ ແລະ

ພຣະບັນຍັດຂໍ້ອື່ນໆທີ່ມີຄ່າສູງກວ່າທາງສິນທຳ. ກົດສ່ວນຫລາຍຂອງພິທີການໄດ້ສົມບູນໃນລະຫວ່າງການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຂອງພຣະເຢຊູຄຣິດ, ຊຶ່ງສິ້ນສຸດການເສຍສະລະໂດຍການຫລັ່ງໂລຫິດ (ແອວ 34:13–14). ກົດດັ່ງກ່າວໄດ້ຖືກປະຕິບັດພາຍໃຕ້ ຖານະປະໂລຫິດແຫ່ງອາໂຣນ ແລະ ເປັນພຣະກິດຕິຄຸນທີ່ຕຽມເພື່ອການຍຶດໝັ້ນຂອງມັນມາສູ່ພຣະຄຣິດ.

ທຳອິດເຮົາຈະມອບກົດໃຫ້ແກ່ພວກເຂົາ, ແຕ່ມັນຈະເປັນຕາມກົດຂອງບັນຍັດຝ່າຍໂລກ, **ປຈສ, ອພຍ** 34:1–2.

ກົດບັນຍັດຈຶ່ງເປັນຜູ້ດູແລ ເພື່ອນຳເຮົາມາສູ່ພຣະຄຣິດ, **ຄລຕ** 3:19–24.

ພວກເຮົາຍັງຮັກສາກົດຂອງໂມເຊ ແລະ ລະນຶກຫາພຣະຄຣິດດ້ວຍຄວາມຕັ້ງໃຈ, **2 ນຟ** 25:24–30. ຄວາມລອດບໍ່ໄດ້ມາເຖິງໂດຍທາງກົດຂອງໂມເຊແຕ່ຝ່າຍດຽວ, **ມຊຢ** 12:27–13:32. ໃນເຮົາ ກົດຂອງໂມເຊຈຶ່ງສົມບູນ, **3 ນຟ** 9:17. ກົດທີ່ມອບໃຫ້ແກ່ໂມເຊນັ້ນມີທີ່ສຸດໃນເຮົາ, **3 ນຟ** 15:1–10.

ເພາະການບໍ່ເຊື່ອຟັງ, ພຣະຜູ້ເປັນເຈົ້າໄດ້ເອົາໂມເຊ ແລະ ຖານະປະໂລຫິດທີ່ສັກສິດໄປຈາກລູກຫລານຂອງອິດສະຣາເອນ, ປະກົດຂອງບັນຍັດຝ່າຍໂລກໄວ້ໃຫ້, **ຄພ** 84:23–27.

**ໂກກ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ມາໂກກ *ບຳອີກ*

ກະສັດອົງໜຶ່ງຂອງມາໂກກ. ເອເຊກຽນໄດ້ທຳນາຍວ່າ ໂກກຈະຮຸກຮານອິດສະຣາເອນໃນເວລາຂອງການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ (ອຊກ 38–39). ການສູ້ຮົບອີກຄັ້ງໜຶ່ງ, ຖືກເອີ້ນວ່າການສູ້ຮົບຂອງໂກກ ແລະ ມາໂກກ, ຈະເກີດຂຶ້ນໃນຊ່ວງທ້າຍຂອງໄລຍະພັນປີ (ພນມ 20:7–9; ຄພ 88:111–116).

**ໂກເນລີໂອ.** *ເບິ່ງ* ຄົນຕ່າງຊາດ; ນາຍທະຫານ; ເປໂຕ *ບຳອີກ*

ນາຍທະຫານຄົນໜຶ່ງທີ່ກາຍຊາເຣຍ, ໄດ້ຮັບບັບຕິສະມາຈາກເປໂຕ (ກຈກ 10). ລາວອາດເປັນຄົນຕ່າງຊາດຄົນທຳອິດທີ່ໄດ້ເຂົ້າຮ່ວມສາດສະໜາຈັກ ໂດຍທີ່ບໍ່ໄດ້ປ່ຽນໃຈເຫລື້ອມໃສນັບຖືສາດສະໜາຢູດາກ່ອນ. ການບັບຕິສະມາຂອງໂກເນລີໂອ ແລະ ຄອບຄົວຂອງລາວໄດ້ເປີດທາງໃຫ້ແກ່ພຣະກິດຕິຄຸນ ເພື່ອສັ່ງສອນຄົນຕ່າງຊາດ. ເປໂຕ, ອັກຄະສາວົກຊັ້ນຜູ້ໃຫຍ່, ຜູ້ມີຂໍກະແຈຂອງອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກໃນເວລານັ້ນ, ໄດ້ນຳພາການສັ່ງສອນນີ້.

**ໂກໂມຣາ.** *ເບິ່ງ* ໂຊໂດມ *ບຳອີກ*

ໃນພຣະຄຳພີເດີມ, ເມືອງທີ່ຊົ່ວຮ້າຍ ຊຶ່ງຖືກພຣະຜູ້ເປັນເຈົ້າທຳລາຍ (ປຖກ 19:12–29).

**ໂກລີອາດ.** *ເບິ່ງ* ດາວິດ *ບຳອີກ*

ໃນພຣະຄຳພີເດີມ, ຍັກໃຫຍ່ຂອງຊາວຟີລິດສະຕິນ ຜູ້ໄດ້ເວົ້າທ້າກອງທະຫານຊາວອິດສະຣາເອນ. ດາວິດໄດ້ຮັບເອົາການເວົ້າທ້າຂອງລາວ ແລະ ໄດ້ຂ້າລາວດ້ວຍຄວາມຊ່ວຍເຫລືອຂອງພຣະຜູ້ເປັນເຈົ້າ (1 ຊມອ 17).

**ໂກໂລຊາຍ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ບຳອີກ*

ໜັງສືໃນພຣະຄຳພີໃໝ່. ມັນເປັນຈົດໝາຍຕົ້ນສະບັບທີ່ອັກຄະສາວົກໂປໂລໄດ້ຂຽນເຖິງຊາວໂກໂລຊາຍ ຫລັງຈາກເອປາຟາໄດ້ມາຢ້ຽມຢາມລາວ, ຜູ້ຊຶ່ງເປັນຜູ້ປະກາດຂ່າວຂອງສາດສະໜາຈັກຢູ່ໃນເມືອງໂກໂລຊາຍ (ກລຊ 1:7–8). ເອປາຟາໄດ້ບອກໂປໂລວ່າຊາວໂກໂລຊາຍພວມເຮັດຄວາມຜິດໜັກ—ພວກເຂົາຄິດວ່າພວກເຂົາດີກວ່າຄົນອື່ນໆເພາະວ່າພວກເຂົາໄດ້ຮັກສາພິທີການບາງຢ່າງດ້ວຍຄວາມລະມັດລະວັງ (ກລຊ 2:16), ບໍ່ຍອມເຮັດຕາມຄວາມຕ້ອງການທາງຮ່າງກາຍບາງຢ່າງ, ແລະ ນະມັດສະການທູດ (ກລຊ 2:18). ການປະຕິບັດດັ່ງກ່າວໄດ້ເຮັດໃຫ້ຊາວໂກໂລຊາຍຮູ້ສຶກວ່າ ພວກເຂົາກຳລັງໄດ້ຮັບການຊຳລະໃຫ້ບໍລິສຸດ. ພວກເຂົາຍັງຮູ້ສຶກອີກວ່າພວກເຂົາເຂົ້າໃຈຄວາມລຶກລັບຂອງຈັກກະວານຫລາຍກວ່າສະມາຊິກຂອງສາດສະໜາຈັກຄົນອື່ນໆ. ໃນສານຂອງລາວ, ໂປໂລໄດ້ຕິເຕືອນພວກເຂົາໂດຍການສິດ

ສອນວ່າ ການໄຖ່ມາເຖິງຜ່ານທາງພຣະຄຣິດເທົ່ານັ້ນ ແລະ ວ່າເຮົາຕ້ອງສະຫລາດ ແລະ ຮັບໃຊ້ພຣະອົງ.

ບົດທີ 1 ແມ່ນຄຳທັກທາຍຂອງໂປໂລຕໍ່ຊາວໂກໂລຊາຍ. ບົດທີ 2–3 ແມ່ນຄຳສອນ ແລະ ບັນຈຸບົດຄວາມ ເຖິງພຣະຄຣິດວ່າເປັນພຣະຜູ້ໄຖ່, ເຖິງສິ່ງອັນຕະລາຍຂອງການນະມັດສະການຈອມປອມ, ແລະ ເຖິງຄວາມສຳຄັນຂອງການຟື້ນຄືນຊີວິດ. ບົດທີ 4 ສິດສອນວ່າໄພ່ພົນຂອງພຣະເຈົ້າຕ້ອງສະຫລາດໃນທຸກສິ່ງທັງປວງ.

**ກອງປະຊຸມໃນສະຫວັນ.** *ເບິ່ງ* ສົງຄາມໃນສະຫວັນ; ຊີວິດກ່ອນເກີດ; ແຜນແຫ່ງການໄຖ່ *ນຳອີກ*

ໂອກາດໃນຊີວິດກ່ອນມະຕະ ເມື່ອພຣະບິດາໄດ້ສະເໜີແຜນຂອງພຣະອົງຕໍ່ລູກໆທາງວິນຍານຂອງພຣະອົງ ຜູ້ທີ່ຈະມາສູ່ໂລກນີ້.

ເຫລົ່າທູດຂອງພຣະເຈົ້າໄດ້ເປັ່ງສຽງໂຮ່ຮ້ອງຍິນດີ, **ໂຢບ** 38:4–7. ຕັ້ງບັນລັງຂອງເຮົາໄວ້ໃນທີ່ສູງສຸດເໜືອດວງດາວຕ່າງໆຂອງພຣະເຈົ້າ, **ອຊຢ** 14:12–13.

ມີສົງຄາມໃນສະຫວັນ, **ພນມ** 12:7–11.

ກ່ອນພວກເພິ່ນເກີດ, ພວກເພິ່ນໄດ້ຮັບບົດຮຽນທຳອິດຂອງພວກເພິ່ນຢູ່ໃນໂລກວິນຍານ, **ຄພ** 138:56.

ຊາຕານໄດ້ກະບົດໃນຊີວິດກ່ອນມະຕະ, **ມຊ** 4:1–4. ຜູ້ຄົນທີ່ມີຄວາມຮູ້ແຈ້ງໄດ້ຖືກຈັດໄວ້ກ່ອນໂລກເປັນມາ, **ອຣຮ** 3:22. ບັນດາພຣະເຈົ້າໄດ້ປຶກສາຫາລືກັນ, **ອຣຮ** 4:26. ບັນດາພຣະເຈົ້າໄດ້ສິ້ນສຸດວຽກງານທີ່ພວກພຣະອົງໄດ້ແນະນຳໃຫ້ເຮັດ, **ອຣຮ** 5:2.

**ເກີດໃໝ່, ເກີດຈາກພຣະເຈົ້າ.** *ເບິ່ງ* ທີ່ຖືກຳເນີດ; ບັບຕິສະມາ, ໃຫ້ບັບຕິສະມາ; ບຸດ ແລະ ທິດາຂອງພຣະເຈົ້າ; ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ; ມະນຸດທີ່ມີຈິດໃຈທຳມະດາ; ລູກໆຂອງພຣະຄຣິດ *ນຳອີກ*

ເພື່ອໃຫ້ພຣະວິນຍານຂອງພຣະຜູ້ເປັນເຈົ້າກໍ່ໃຫ້ເກີດການປ່ຽນແປງອັນຍິ່ງໃຫຍ່ໃນໃຈຂອງບຸກຄົນ ເພື່ອເຂົາຈະບໍ່ມີຄວາມປາດຖະໜາທີ່ຈະເຮັດຄວາມຊົ່ວ, ມີແຕ່ປາດຖະໜາທີ່ຈະສະແຫວງຫາສິ່ງທີ່ເປັນຂອງພຣະເຈົ້າ.

ເຮົາຈະໃຫ້ເຂົາມີຄວາມຄິດ ແລະ ຈິດໃຈໃໝ່, **ອຊກ** 11:19 (ອຊກ 18:31; 36:26).

ຜູ້ທີ່ເຊື່ອໃນພຣະນາມຂອງພຣະຄຣິດໄດ້ເກີດມາ, ບໍ່ແມ່ນຈາກເລືອດເນື້ອ, ແຕ່ເກີດຈາກພຣະເຈົ້າ, **ຢຮ** 1:12–13. ຍົກເວັ້ນແຕ່ມະນຸດຈະເກີດຈາກນ້ຳ ແລະ ພຣະວິນຍານ, ເຂົາຈະເຂົ້າໄປໃນອານາຈັກຂອງພຣະເຈົ້າບໍ່ໄດ້, **ຢຮ** 3:3–7. ພວກເຮົາສາມາດເກີດໃໝ່ອີກໂດຍພຣະຄຳຂອງພຣະເຈົ້າ, **1 ປຕ** 1:3–23. ຜູ້ໃດກໍຕາມທີ່ເກີດຈາກພຣະເຈົ້າກໍບໍ່ເຮັດບາບອີກຕໍ່ໄປ, **ປຈສ, 1 ຢຮ** 3:9. ເພາະທຸກຄົນທີ່ເກີດຈາກພຣະເຈົ້າກໍມີໄຊຕໍ່ໂລກ, **1 ຢຮ** 5:4.

ຄົນທີ່ເກີດຈາກພຣະຄຣິດເຮັດພັນທະສັນຍາກັບພຣະເຈົ້າ, **ມຊຢ** 3:19; 5:2–7. ຄົນທັງປວງຕ້ອງເກີດໃໝ່; ແທ້ຈິງແລ້ວ, ເກີດຈາກພຣະເຈົ້າ, **ມຊຢ** 27:25–26 (ແອວ 5:49). ພວກທ່ານໄດ້ເກີດຈາກພຣະເຈົ້າທາງວິນຍານແລ້ວບໍ, **ແອວ** 5:12–19. ຖ້າຫາກທ່ານບໍ່ເກີດໃໝ່ ທ່ານຈະບໍ່ໄດ້ຮັບອານາຈັກສະຫວັນມາເປັນມູນມໍລະດົກ, **ແອວ** 7:14.

ຜູ້ໃດກໍຕາມທີ່ເຊື່ອໃນຄຳຂອງເຮົາຈະໄດ້ເກີດໃໝ່ຈາກເຮົາ, ແມ່ນແຕ່ດ້ວຍນ້ຳ ແລະ ດ້ວຍພຣະວິນຍານ, **ຄພ** 5:16.

ພວກເຈົ້າຈະຕ້ອງໄດ້ເກີດໃໝ່ອີກເຂົ້າໃນອານາຈັກສະຫວັນ, **ມຊ** 6:59.

**ເກືອ**

ຖືກໃຊ້ເປັນສິ່ງໜຶ່ງທີ່ສຳຄັນໃນການກັນອາຫານບໍ່ໃຫ້ເນົ່າ ໃນໂລກສະໄໝບູຮານ; ມັນຖືກນັບວ່າ ເປັນສິ່ງທີ່ຈຳເປັນສຳລັບຊີວິດ.

ເມຍຂອງໂລດໄດ້ກາຍເປັນເສົາເກືອ, **ປຖກ** 19:26.

ເຈົ້າທັງຫລາຍເປັນເກືອສຳລັບມວນມະນຸດສະໂລກ, **ມທ** 5:13 (ລກ 14:34; 3 ນຟ 12:13).

ຜູ້ຄົນແຫ່ງພັນທະສັນຍາຂອງພຣະຜູ້ເປັນເຈົ້າ ໄດ້ຖືກນັບວ່າເປັນເກືອຂອງແຜ່ນດິນໂລກ, **ຄພ** 101:39–40. ຖ້າຫາກໄພ່ພົນຂອງພຣະເຈົ້າບໍ່ໄດ້ເປັນຜູ້ຊ່ວຍໃຫ້ລອດຂອງ

ມະນຸດ, ພວກ ເຂົາກໍ ຄື ກັນ ກັບ ເກືອ ທີ່ ໝົດ ລົດ ເຄັມຂອງມັນ, **ຄພ** 103:9–10.

**ກຽດຄ້ານ, ຄວາມກຽດຄ້ານ**

ບໍ່ເຂັ້ມແຂງ ແລະ ບໍ່ມີພາກສ່ວນໃນວຽກງານທີ່ຊອບທຳ.

ຜູ້ໃດກໍຕາມທີ່ບໍ່ຢາກເຮັດວຽກ ກໍຢ່າໃຫ້ຜູ້ນັ້ນກິນ, **2 ທສນ** 3:10.

ພວກ ເຂົາຈຶ່ງ ກາຍ ເປັນ ຄົນກຽດຄ້ານ, ເຕັມໄປດ້ວຍການກໍ່ກວນ, **2 ນຟ** 5:24. ໃຫ້ລະເວັ້ນຈາກຄວາມຂີ້ຄ້ານມັກງ່າຍ, **ແອວ** 38:12.

ຄົນ ທີ່ ກຽດ ຄ້ານ ຈະ ບໍ່ ກິນ ອາຫານ ຂອງຄົນທຳງານ, **ຄພ** 42:42. ວິບັດ ແກ່ ເຈົ້າ ຜູ້ທີ່ຈະ ບໍ່ອອກແຮງດ້ວຍມືຂອງຕົນເອງ, **ຄພ** 56:17. ຈົ່ງກະຕືລືລົ້ນ ໃນ ອຸດົມການ ດີ, **ຄພ** 58:27. ເຊົາກຽດຄ້ານ, **ຄພ** 88:124.

**ກຽດຊັງ, ຄວາມກຽດຊັງ.** *ເບິ່ງ* ແກ້ແຄ້ນ, ການແກ້ແຄ້ນ; ເປັນສັດຕູກັນ, ຄວາມເປັນສັດຕູກັນ; ຮັກ, ຄວາມຮັກ *ນຳອີກ*

ກຽດຊັງເປັນການບໍ່ມັກບາງຄົນ ຫລື ບາງສິ່ງຫລາຍ.

ເຮົາແມ່ນພຣະເຈົ້າ, ເຮົານຳການລົງໂທດມາສູ່ພວກທີ່ກຽດຊັງເຮົາ ຕະຫລອດທັງລູກຫລານຂອງພວກເຂົາ, **ອພຍ** 20:5. ມີຫົກຢ່າງທີ່ພຣະຜູ້ ເປັນ ເຈົ້າກຽດ ຊັງ, **ສພສ** 6:16. ລູກທີ່ ໂງ່ຈ້າເບົາປັນຍາເຮັດໃຫ້ແມ່ຖືກໝິ່ນປະໝາດ, **ສພສ** 15:20. ພວກເຮົາດູໝິ່ນປະໝາດ ແລະ ປະຖິ້ມທ່ານໄປ, **ອຊຢ** 53:3.

ຈົ່ງຮັກສັດຕູຂອງເຈົ້າ, **ມທ** 5:44. ເຂົາຈະຊັງນາຍຜູ້ນີ້ ແລະ ໄປຮັກນາຍຜູ້ນັ້ນ ເຂົາຈະສັດຊື່ຕໍ່ນາຍຜູ້ນີ້ ແລະ ຈະໝິ່ນປະໝາດນາຍຜູ້ນັ້ນ, **ມທ** 6:24. ຄົນ ທັງປວງຈະ ກຽດ ຊັງພວກເຈົ້າເພາະເຫັນແກ່ນາມຂອງເຮົາ, **ມທ** 10:22. ທຸກຄົນທີ່ເຮັດຊົ່ວກໍກຽດຊັງຄວາມສະຫວ່າງ, **ຢຮ** 3:20. ຢ່າໃຫ້ຜູ້ໃດຜູ້ໜຶ່ງປະໝາດຄວາມໜຸ່ມຂອງເຈົ້າ, **1 ຕມທ** 4:12.

ເພາະວ່າເຂົາຮັ່ງມີ, ເຂົາຈຶ່ງດູຖູກຄົນທຸກຍາກ, **2 ນຟ** 9:30. ຢ່າໄດ້ໝິ່ນປະໝາດການເປີດເຜີຍຂອງພຣະເຈົ້າເລີຍ, **ຢຄ** 4:8. ພວກເຂົາມີຄວາມກຽດຊັງພວກເຮົາຢ່າງບໍ່ສິ້ນສຸດ, **ຢຄ** 7:24.

ມະນຸດ ຈະ ຖືວ່າຄຳແນະນຳຂອງພຣະເຈົ້າໄຮ້ປະໂຫຍດ, ແລະ ດູຖູກພຣະຄຳຂອງພຣະອົງ, **ຄພ** 3:7.

ຂ້າພະເຈົ້າຈະຖືກກຽດຊັງ ແລະ ຖືກຂົ່ມເຫັງເພາະການ ເວົ້າວ່າ ຂ້າພະເຈົ້າໄດ້ເຫັນພາບນັ້ນ, **ຈສ—ປ** 1:25.

**ຂັດແຍ້ງ, ການຂັດແຍ້ງ.** *ເບິ່ງ* ກະບົດ, ການກະບົດ *ນຳອີກ*

ການ ຜິດ ຖຽງ ກັນ, ການ ໂຕ້ຖຽງ, ແລະ ການວິວາດ. ການຂັດແຍ້ງ, ໂດຍສະເພາະ ລະຫວ່າງສະມາຊິກໃນສາດສະໜາຈັກຂອງພຣະຜູ້ເປັນເຈົ້າ ຫລື ລະຫວ່າງສະມາຊິກໃນຄອບຄົວ, ເປັນສິ່ງທີ່ບໍ່ພໍພຣະໄທຕໍ່ພຣະຜູ້ເປັນເຈົ້າ.

ຂໍຢ່າໃຫ້ຄົນຂອງໝູ່ເຮົາຕ້ອງຜິດຖຽງກັນເລີຍ, **ປຖກ** 13:8. ການອວດອ້າງສ້າງແຕ່ເລື່ອງເດືອດຮ້ອນເກາະຜິດ, **ສພສ** 13:10.

ຖ້າຜູ້ໃດມີເລື່ອງຕໍ່ກັນກໍຈົ່ງຍົກໂທດໃຫ້ກັນ ແລະກັນ ດັ່ງທີ່ພຣະຄຣິດໄດ້ໂຜດຍົກໂທດ, **ກລຊ** 3:13. ຈົ່ງຫລີກເວັ້ນຈາກການໂຕ້ຖຽງອັນໂງ່ງ່າວ, **ຕຕ** 3:9.

ພຣະຜູ້ເປັນເຈົ້າບັນຊາມະນຸດບໍ່ໃຫ້ຂັດແຍ້ງກັນ, **2 ນຟ** 26:32. ພວກທ່ານຈະບໍ່ປ່ອຍໃຫ້ລູກຫລານຂອງພວກທ່ານຕໍ່ສູ້ ແລະ ຜິດຖຽງກັນ, **ມຊຢ** 4:14. ແອວມາສັ່ງວ່າບໍ່ໃຫ້ມີການຂັດແຍ້ງກັນຢູ່ໃນບັນດາສະມາຊິກຂອງສາດສະໜາຈັກ, **ມຊຢ** 18:21. ຊາຕານແຜ່ຂ່າວລືແລະ ການຂັດແຍ້ງ, **ຮລມ** 16:22. ມານເປັນບິດາຂອງການຂັດແຍ້ງ ແລະ ຍຸຍົງໃຈຂອງມະນຸດໃຫ້ຂັດແຍ້ງກັນ, **3 ນຟ** 11:29 (ມຊຢ 23:15).

ໃຫ້ສະຖາປະນາພຣະກິດຕິຄຸນຂອງເຮົາຂຶ້ນ, ເພື່ອຈະບໍ່ມີການຂັດແຍ້ງກັນຫລາຍ, **ຄພ** 10:62–64. ຈົ່ງເຊົາຂັດແຍ້ງກັນ, **ຄພ** 136:23.

**ຂ້າ.** *ເບິ່ງ* ຄາດຕະກຳ, ການຄາດຕະກຳ; ໂທດປະຫານຊີວິດ

**ຂ່າວຄາວ**

ໜັງ ສື ສອງ ເຫລັ້ມ ໃນ ພຣະ ຄຳ ພີ ເດີມ. ທັງ ສອງ ເຫລັ້ມ ໄດ້ ບອກ ປະຫວັດ ຫຍໍ້ ຂອງ ເຫດ ການຕ່າງໆທີ່ເກີດຂຶ້ນນັບຕັ້ງແຕ່ການສ້າງຈົນ ເຖິງ ການ ປະກາດ ຂອງ ໄຊຣັດອະນຸຍາດ ໃຫ້ ຊາວຢິວກັບຄືນເຢຣູຊາເລັມ.

*ພຣະທຳຂ່າວຄາວທີໜຶ່ງ:* ບົດທີ 1–9 ບອກ ລຳດັບ ເຊື້ອສາຍ ຈາກອາດາມເຖິງໂຊນ. ຂ່າວ ຄາວ ບົດທີ 10 ການ ມໍລະນະກຳຂອງໂຊນ. ບົດທີ 11–22 ເລົ່າເຫດການກ່ຽວພັນກັບການ ປົກຄອງຂອງດາວິດ. ບົດທີ 23–27 ອະທິບາຍ ວ່າໂຊໂລໂມນໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດ ແລະ ຊາວເລວີໄດ້ຖືກຈັດຕັ້ງໃຫ້ເປັນລະບຽບ. ບົດທີ 28 ອະທິບາຍວ່າ ດາວິດໄດ້ບັນຊາໂຊ ໂລໂມນໃຫ້ສ້າງພຣະວິຫານ. ບົດທີ 29 ບັນທຶກ ການມໍລະນະກຳຂອງດາວິດ.

*ພຣະທຳຂ່າວຄາວທີສອງ:* ບົດທີ 1–9 ເລົ່າ ເຫດການກ່ຽວພັນກັບການປົກຄອງຂອງໂຊ ໂລໂມນ. ບົດທີ 10–12 ບອກເຖິງການປົກ ຄອງຂອງເຣໂຮໂບອາມ ລູກຊາຍຂອງໂຊໂລ ໂມນ, ລະຫວ່າງອານາຈັກໃຫຍ່ຂອງອິດສະ ຣາເອນໄດ້ຖືກແຍກອອກເປັນອານາຈັກພາກ ເໜືອ ແລະ ອານາຈັກພາກໃຕ້. ບົດທີ 13–36 ບັນຍາຍເຖິງການປົກຄອງຂອງກະສັດອົງ ຕ່າງໆ ຈົນເຖິງການຍຶດຄອງອານາຈັກຂອງ ຢູດາໂດຍເນບູກາດເນັດສາ. ໜັງສືມ້ວນທ້າຍ ດ້ວຍຄຳສັ່ງຂອງໄຊຣັດວ່າ ລູກຫລານຂອງ ຢູດາທີ່ເປັນຊະເລີຍສາມາດກັບຄືນໄປເຢຣູ ຊາເລັມ.

**ຂ່າວລື.** *ເບິ່ງ* ນິນທາ; ເວົ້າຈາບໍ່ດີ *ນຳອີກ*

ຊາຕານທ່ອງທ່ຽວ ໄປມາແຜ່ຂ່າວລື ແລະ ການ ຂັດ ແຍ້ງ—ບາງ ເທື່ອອີງ ຕາມ ຄວາມ ຈິງ ບາງສ່ວນ—ເພື່ອຫັນຜູ້ຄົນໄປຕໍ່ຕ້ານພຣະເຈົ້າ ແລະ ຄວາມດີ (ຣລມ 16:22; ຈສ—ປ 1:1). ເຄື່ອງໝາຍຢ່າງໜຶ່ງຂອງການສະເດັດມາຄັ້ງ ທີສອງຂອງພຣະເຢຊູຄຣິດ ແມ່ນວ່າຜູ້ຄົນຈະ ກ່າວເຖິງສົງຄາມ ແລະ ມີຂ່າວລືເລື່ອງສົງຄາມ (ມທ 24:6; ຄພ 45:26; ຈສ—ມ 1:23).

**ຂຸ່ນເຄືອງໃຈ**

ທີ່ຈະລະເມີດກົດແຫ່ງສະຫວັນ, ທີ່ຈະເຮັດ ບາບ, ຫລື ທີ່ຈະສ້າງຄວາມບໍ່ສະບາຍໃຈ ຫລື ຄວາມເຈັບປວດ; ທີ່ຈະເຮັດໃຫ້ບໍ່ພໍໃຈ ຫລື ເຮັດໃຫ້ໃຈຮ້າຍ.

ການ ຜິດ ຖຽງ ກັນ ກໍ່ສ່ຳກັບ ເຫລັກໄລປະຕູ ອັດຕັນຕົນໄວ້, **ສພສ** 18:19.

ຖ້າ ຕາ ເບື້ອງຂວາຂອງ ເຈົ້າເປັນຕົ້ນເຫດ ພາໃຫ້ເຈົ້າເຮັດບາບ, ຈົ່ງຄວັດມັນອອກ, **ມທ** 5:29. ຖ້າຜູ້ໃດເປັນຕົ້ນເຫດ ພາໃຫ້ເດັກນ້ອຍ ຄົນໜຶ່ງໃນບັນດາເດັກນ້ອຍເຫລົ່ານີ້ ທີ່ເຊື່ອໃນ ເຮົາຕົກໃນບາບ ແມ່ນຈະເອົາຫີນໂມ້ແປ້ງກ້ອນ ໃຫຍ່ຜູກຄໍຜູ້ນັ້ນ ແລະ ຖິ້ມລົງໃນທະເລເລິກ ເສຍກໍດີກວ່າ, **ມທ** 18:6 (ຄພ 121:19–22).

ຖ້າຫາກອ້າຍເອື້ອຍນ້ອງຂອງເຈົ້າໄດ້ເຮັດ ຜິດຕໍ່ເຈົ້າ ແລະ ສາລະພາບ, ໃຫ້ເຈົ້າຄືນດີກັບ ເຂົາ, **ຄພ** 42:88. ບໍ່ມີສິ່ງໃດທີ່ມະນຸດຈະເຮັດ ໃຫ້ພຣະເຈົ້າຂຸ່ນເຄືອງ, ຍົກເວັ້ນແຕ່ຜູ້ທີ່ບໍ່ສາ ລະພາບວ່າພຣະຫັດຂອງພຣະອົງຢູ່ໃນທຸກສິ່ງ ທັງປວງ ແລະ ບໍ່ເຊື່ອຟັງຕໍ່ພຣະບັນຍັດຂອງ ພຣະອົງ, **ຄພ** 59:21.

**ເຂດແຈັກສັນ, ລັດມີເຊີຣີ (ສະຫະລັດອາເມຣິກາ).** *ເບິ່ງ* ເຢຣູຊາເລັມໃໝ່ *ນຳອີກ*

ສະຖານທີ່ເຕົ້າໂຮມກັນຂອງໄພ່ພົນຂອງ ພຣະເຈົ້າໃນຍຸກສຸດທ້າຍ; ນັ້ນຄື, ຈຸດໃຈກາງ ບ່ອນທີ່ພວກເຂົາຈະສະຖາປະນາເຢຣູຊາເລັມ ໃໝ່ ຂຶ້ນ (ຄພ 57–58; 82; 101:69–71; 105:28).

**ຂົ່ມເຫັງ, ການຂົ່ມເຫັງ.** *ເບິ່ງ* ຍາກລຳບາກ, ຄວາມຍາກລຳບາກ *ນຳອີກ*

ທີ່ຈະກໍ່ຄວາມທຸກທໍລະມານໃຈ ຫລື ຄວາມ ເຈັບປວດແກ່ຄົນອື່ນ ເພາະຄວາມເຊື່ອຖືຂອງ ເຂົາ ຫລື ຖານະໃນສັງຄົມຂອງເຂົາ; ທີ່ຈະລົບ ກວນ ຫລື ບີບບັງຄັບ.

ຜູ້ໃດຖືກຂົ່ມເຫັງເພາະເຫັນແກ່ຄວາມຊອບ ທຳກໍເປັນສຸກ, **ມທ** 5:10 (3 ນຟ 12:10). ຈົ່ງ ອະທິຖານ ເພື່ອຜູ້ທີ່ຂົ່ມເຫັງເຈົ້າ, **ມທ** 5:44 (3 ນຟ 12:44).

ເພາະວ່າເຂົາຮັ່ງມີ, ເຂົາຈຶ່ງຂົ່ມເຫັງຄົນອ່ອນໂຍນ, **2 ນຟ** 9:30 (2 ນຟ 28:12–13). ຄົນຊອບທຳທີ່ມຸ້ງຫາພຣະຄຣິດ ທັງທີ່ມີການຂົ່ມເຫັງທຸກຢ່າງ ຈະບໍ່ຕາຍ, **2 ນຟ** 26:8.

ສິ່ງທັງໝົດເຫລົ່ານີ້ຈະເປັນປະສົບການໃຫ້ແກ່ເຈົ້າ, **ຄພ** 122:7.

**ຂໍກະແຈຂອງຖານະປະໂລຫິດ.** *ເບິ່ງ* ຍຸກສະໄໝ; ຖານະປະໂລຫິດ; ຝ່າຍປະທານສູງສຸດ *ບຳອິກ*

ຂໍກະແຈ ຄືສິດຂອງຝ່າຍປະທານ, ຫລື ອຳນາດທີ່ພຣະເຈົ້າໄດ້ມອບໃຫ້ມະນຸດເພື່ອຊີ້ນຳ, ຄວບຄຸມ, ແລະ ປົກຄອງຖານະປະໂລຫິດຂອງພຣະເຈົ້າຢູ່ໃນໂລກ. ຜູ້ດຳລົງຖານະປະໂລຫິດໄດ້ຖືກເອີ້ນໃຫ້ຮັບຕຳແໜ່ງຂອງຝ່າຍປະທານເພື່ອຮັບເອົາຂໍກະແຈຈາກຜູ້ທີ່ມີສິດອຳນາດເໜືອເຂົາ. ຜູ້ດຳລົງຖານະປະໂລຫິດ ໃຊ້ຖານະປະໂລຫິດ ພຽງແຕ່ໃນຂອບເຂດທີ່ຜູ້ມີຂໍກະແຈກຳນົດໄວ້. ປະທານຂອງສາດສະໜາຈັກເປັນພຽງຜູ້ດຽວເທົ່ານັ້ນທີ່ມີ ແລະ ໄດ້ຮັບສິດອຳນາດທີ່ຈະນຳໃຊ້ຂໍກະແຈຂອງຖານະປະໂລຫິດທັງໝົດ (ຄພ 107:65–67, 91–92; 132:7).

ເປໂຕໄດ້ຮັບຂໍກະແຈຂອງອານາຈັກ, **ມທ** 16:19.

ມີຄາເອນ (ອາດາມ) ໄດ້ຮັບຂໍກະແຈແຫ່ງຄວາມລອດພາຍໃຕ້ການຊີ້ນຳຂອງພຣະເຢຊູຄຣິດ, **ຄພ** 78:16. ຂໍກະແຈຂອງອານາຈັກເປັນຂອງຝ່າຍປະທານສູງສຸດສະເໝີໄປ, **ຄພ** 81:2. ຖານະປະໂລຫິດແຫ່ງເມນຄີເສເດັກຖືຂໍກະແຈແຫ່ງຄວາມລຶກລັບຂອງຄວາມຮູ້ຂອງພຣະເຈົ້າ, **ຄພ** 84:19. ອັກຄະສາວົກສິບສອງຖືຂໍກະແຈພິເສດ, **ຄພ** 107:35; 112:16, 32; 124:128. ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ ໄດ້ຮັບຂໍກະແຈກ່ຽວກັບການເຕົ້າໂຮມຂອງຊາວອິດສະຣາເອນ, ພຣະກິດຕິຄຸນຂອງອັບຣາຮາມ, ແລະ ອຳນາດແຫ່ງການຜະນຶກ, **ຄພ** 110:11–16. ຝ່າຍປະທານສູງສຸດ ແລະ ອັກຄະສາວົກສິບສອງຖືຂໍກະແຈແຫ່ງຍຸກສະໄໝຂອງຄວາມສົມບູນແຫ່ງເວລາ, **ຄພ** 112:30–34. ເຈົ້າໜ້າທີ່ໃນຖານະປະໂລຫິດຖືຂໍກະແຈ, **ຄພ** 124:123. ຜູ້ທີ່ມີຂໍກະແຈສາມາດໄດ້ຮັບຄວາມຮູ້, **ຄພ** 128:11.

ຖານະປະໂລຫິດແຫ່ງອາໂຣນຖືຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ ແລະ ພຣະກິດຕິຄຸນແຫ່ງການກັບໃຈ ແລະ ການບັບຕິສະມາ, **ຈສ—ປ** 1:69 (ຄພ 13).

**ຂໍ້ປະກາດຢ່າງເປັນທາງການ 1.** *ເບິ່ງ* ຄຳຖະແຫລງນະໂຍບາຍ; ແຕ່ງງານ, ການແຕ່ງງານ—ການມີເມຍຫລາຍຄົນ; ວູດຣັບ, ວິວເຝີດ *ບຳອິກ*

ຖືກພິມໄວ້ໃນທ້າຍພຣະຄຳພີຄຳສອນ ແລະ ພັນທະສັນຍາ, ສ່ວນທຳອິດຂອງຂໍ້ປະກາດຢ່າງເປັນທາງການ 1 ຍັງເປັນທີ່ຮູ້ຈັກກັນອີກວ່າເປັນ ຄຳຖະແຫລງນະໂຍບາຍ. ມັນໄດ້ຖືກມອບໃຫ້ໂດຍປະທານ ວິວເຝີດ ວູດຣັບ ແລະ ໄດ້ສະເໜີຕໍ່ສະມາຊິກຂອງສາດສະໜາຈັກຢູ່ກອງປະຊຸມໃຫຍ່ສາມັນ ໃນວັນທີ 6 ເດືອນຕຸລາ 1890. ຕົ້ນປີ 1862, ກົດໝາຍຂໍ້ຕ່າງໆເປັນເວລາຊາວຫ້າປີຈາກນັ້ນໄດ້ເຮັດໃຫ້ການມີເມຍຫລາຍຄົນ ເປັນສິ່ງຜິດກົດໝາຍຢູ່ໃນສະຫະລັດອາເມຣິກາ. ພຣະຜູ້ເປັນເຈົ້າໄດ້ສະແດງພາບນິມິດ ແລະ ການເປີດເຜີຍແກ່ວິວເຝີດ ວູດຣັບ ເຖິງສິ່ງທີ່ຈະເກີດຂຶ້ນ ຖ້າຫາກໄພ່ພົນຂອງພຣະເຈົ້າບໍ່ເຊົາເລື່ອງການມີເມຍຫລາຍຄົນ. ຄຳຖະແຫລງນະໂຍບາຍເປັນທາງການໄດ້ປະກາດວ່າ ຈະບໍ່ມີການມີເມຍຫລາຍຄົນອີກຕໍ່ໄປ.

**ຂໍ້ປະກາດຢ່າງເປັນທາງການ 2.** *ເບິ່ງ* ຄິມໂບ, ສະເປັນເຊີ ດັບເບີນຢູ; ຖານະປະໂລຫິດ *ບຳອິກ*

ໃບຖະແຫລງຄຳສອນກ່ຽວກັບຜູ້ທີ່ສາມາດດຳລົງຖານະປະໂລຫິດຂອງພຣະເຈົ້າ, ບັດນີ້ ໄດ້ຖືກພິມໄວ້ຢູ່ໃນທ້າຍພຣະຄຳພີຄຳສອນ ແລະ ພັນທະສັນຍາ. ໃນຕົ້ນເດືອນມິຖຸນາ ປີ 1978, ພຣະຜູ້ເປັນເຈົ້າໄດ້ເປີດເຜີຍຕໍ່ປະທານ ສະເປັນເຊີ ດັບເບີນຢູ ຄິມໂບ ວ່າຖານະປະໂລຫິດຄວນຖືກມອບໃຫ້ແກ່ສະມາຊິກຜູ້ຊາຍທຸກຄົນຂອງສາດສະໜາຈັກທີ່ມີຄ່າຄວນ. ສິ່ງນີ້ໄດ້ເຮັດໃຫ້ຖານະປະໂລຫິດມີໃຫ້ແກ່ຜູ້ຊາຍທີ່ມີຄ່າຄວນທຸກຄົນ ແລະ ພອນຂອງພຣະວິຫານ

ມີໃຫ້ແກ່ສະມາຊິກທີ່ມີຄ່າຄວນທຸກຄົນ, ບໍ່ວ່າເຊື້ອຊາດ ຫລື ຜິວພັນຈະເປັນແນວໃດກໍຕາມ. ໃນວັນທີ 30 ເດືອນກັນຍາ 1978, ຂໍ້ປະກາດນີ້ໄດ້ຖືກນຳສະເໜີຢູ່ໃນກອງປະຊຸມໃຫຍ່ສາມັນຂອງສາດສະໜາຈັກ ແລະ ກໍໄດ້ຖືກຮັບຮູ້ຢ່າງເປັນເອກະສັນ.

**ຂອງປະທານ.** *ເບິ່ງ* ຂອງປະທານແຫ່ງພຣະວິນຍານ; ຂອງປະທານແຫ່ງພຣະວິນຍານບໍລິສຸດ *ນຳອີກ*

ພຣະເຈົ້າປະທານພອນ ແລະ ຂອງປະທານຢ່າງຫລວງຫລາຍໃຫ້ແກ່ມະນຸດ

ມີຂອງປະທານທາງວິນຍານຫລາຍຢ່າງ, **1 ກຣທ** 12:4–10. ຈົ່ງຮ້ອນໃຈສະແຫວງຫາຂອງພຣະລາຊາທານອັນສຳຄັນກວ່ານັ້ນ, **1 ກຣທ** 12:31. ຂອງປະທານອັນດີທຸກຢ່າງແມ່ນມາຈາກພຣະເຈົ້າ, **ຢກບ** 1:17.

ອຳນາດຂອງພຣະວິນຍານບໍລິສຸດແມ່ນຂອງປະທານຂອງພຣະເຈົ້າ, **1 ນຟ** 10:17. ຜູ້ທີ່ກ່າວວ່າ ບໍ່ມີຂອງປະທານ ຜູ້ນັ້ນບໍ່ຮູ້ພຣະກິດຕິຄຸນຂອງພຣະຄຣິດ, **ມມ** 9:7–8. ຂອງປະທານທີ່ດີທຸກຢ່າງມາຈາກພຣະຄຣິດ, **ມຣນ** 10:8–18.

ຊີວິດນິລັນດອນເປັນຂອງປະທານອັນຍິ່ງໃຫຍ່ທີ່ສຸດໃນຂອງປະທານທັງໝົດຂອງພຣະເຈົ້າ, **ຄພ** 14:7 (1 ນຟ 15:36). ຂອງປະທານໄດ້ຖືກມອບໃຫ້ຜູ້ທີ່ຮັກພຣະຜູ້ເປັນເຈົ້າ, **ຄພ** 46:8–11. ທຸກຄົນບໍ່ໄດ້ຮັບຂອງປະທານທັງໝົດໃຫ້ຕົນເອງ, **ຄພ** 46:11–29.

**ຂອງປະທານສັກສິດ.** *ເບິ່ງ* ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ *ນຳອີກ*

ໃນຄວາມໝາຍທົ່ວໄປ, ຂອງປະທານແຫ່ງອຳນາດຈາກພຣະເຈົ້າ. ສະມາຊິກທີ່ມີຄ່າຄວນຂອງສາດສະໜາຈັກສາມາດໄດ້ຮັບຂອງປະທານແຫ່ງອຳນາດຜ່ານພິທີການໃນພຣະວິຫານ ຊຶ່ງມອບຄຳແນະນຳ ແລະ ພັນທະສັນຍາແຫ່ງຖານະປະໂລຫິດສັກສິດໃຫ້ເຂົາເຈົ້າທີ່ເຂົາເຈົ້າຕ້ອງການກ່ອນຈະໄດ້ຮັບຄວາມສູງສົ່ງ. ຂອງປະທານສັກສິດແມ່ນຮ່ວມດ້ວຍຄຳແນະນຳກ່ຽວກັບແຜນແຫ່ງຄວາມລອດ.

ຢູ່ທີ່ນັ້ນພວກເຈົ້າຈະໄດ້ຮັບພອນດ້ວຍອຳນາດຈາກເບື້ອງບົນ, **ຄພ** 38:32, 38 (ລກ 24:49; ຄພ 43:16). ສ້າງບ້ານຫລັງໜຶ່ງ, ຊຶ່ງໃນບ້ານຫລັງນັ້ນເຮົາປາດຖະໜາທີ່ຈະມອບພອນໃຫ້ແກ່ຄົນເຫລົ່ານັ້ນທີ່ເຮົາໄດ້ເລືອກໄວ້, **ຄພ** 95:8. ເຮົາໄດ້ຕຽມຂອງປະທານສັກສິດ ແລະ ພອນອັນຍິ່ງໃຫຍ່, **ຄພ** 105:12, 18, 33. ຫລາຍຄົນຈະປິຕິຍິນດີເພາະຂອງປະທານສັກສິດທີ່ຜູ້ຮັບໃຊ້ຂອງເຮົາໄດ້ຮັບ, **ຄພ** 110:9. ລັດສະໝີພາບ, ກຽດຕິຍົດ, ແລະ ຂອງປະທານສັກສິດໄດ້ຖືກແຕ່ງຕັ້ງໂດຍພິທີການໃນບ້ານທີ່ສັກສິດຂອງເຮົາ, **ຄພ** 124:39. ຜູ້ທີ່ຖືກເອີ້ນຈາກພຣະບິດາ, ເຊັ່ນດຽວກັບອາໂຣນ, ໄດ້ຮັບຂໍກະແຈຂອງຖານະປະໂລຫິດ, **ຄພ** 132:59.

**ຂອງປະທານທາງວິນຍານ.** *ເບິ່ງ* ຂອງປະທານແຫ່ງພຣະວິນຍານ

**ຂອງປະທານແຫ່ງພຣະວິນຍານ.** *ເບິ່ງ* ຂອງປະທານ *ນຳອີກ*

ພອນພິເສດທາງວິນຍານທີ່ພຣະຜູ້ເປັນເຈົ້າປະທານໃຫ້ແກ່ບຸກຄົນທີ່ມີຄ່າຄວນສຳລັບຜົນປະໂຫຍດຂອງຕົນເອງ ແລະ ສຳລັບໃຫ້ເຂົາເຈົ້າໃຊ້ເພື່ອເປັນພອນໃຫ້ແກ່ຄົນອື່ນ. ສຳລັບຄຳອະທິບາຍກ່ຽວກັບຂອງປະທານແຫ່ງພຣະວິນຍານ, ໃຫ້ສຶກສາ ຄຳສອນ ແລະ ພັນທະສັນຍາ 46:11–33; 1 ກຣທ 12:1–12; ມຣນ 10:8–18.

ຈົ່ງຮ້ອນໃຈສະແຫວງຫາຂອງພຣະລາຊາທານອັນສຳຄັນກວ່ານັ້ນ, **1 ກຣທ** 12:31 (1 ກຣທ 14:1).

ຊາວນີໄຟໄດ້ຮັບຂອງປະທານແຫ່ງພຣະວິນຍານຫລາຍຢ່າງ, **ແອວ** 9:21. ວິບັດແກ່ຄົນທີ່ເວົ້າວ່າພຣະຜູ້ເປັນເຈົ້າບໍ່ກະທຳວຽກງານໂດຍຂອງປະທານ ຫລື ໂດຍອຳນາດຂອງພຣະວິນຍານບໍລິສຸດຕໍ່ໄປອີກແລ້ວ, **3 ນຟ** 29:6. ພຣະເຈົ້າປະທານຂອງປະທານໃຫ້ແກ່ຄົນທີ່ຊື່ສັດ, **ມມ** 9:7. ຂອງປະທານມາໂດຍພຣະວິນຍານຂອງພຣະຄຣິດ, **ມຣນ** 10:17.

ມີຂອງປະທານຫລາຍຢ່າງ ແລະ ແກ່ທຸກຄົນຂອງປະທານຖືກມອບໃຫ້ໂດຍພຣະວິນຍານ,

**ຄພ** 46:11. ຜູ້ນຳຂອງສາດສະໜາຈັກໄດ້ຮັບອຳນາດໃນການຫລິງເຫັນຂອງປະທານແຫ່ງພຣະວິນຍານ, **ຄພ** 46:27. ປະທານຂອງສາດສະໜາຈັກມີຂອງປະທານທັງປວງທີ່ພຣະເຈົ້າໄດ້ປະທານໃຫ້ເປັນຫົວໜ້າຂອງສາດສະໜາຈັກ, **ຄພ** 107:91–92.

**ຂອງປະທານແຫ່ງພຣະວິນຍານບໍລິສຸດ.** *ເບິ່ງ* ຂອງປະທານ; ຂອງປະທານແຫ່ງພຣະວິນຍານ; ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະວິນຍານບໍລິສຸດ *ນຳອີກ*

ມັນເປັນສິດຂອງສະມາຊິກຂອງສາດສະໜາຈັກທຸກຄົນຜູ້ໄດ້ຮັບບັບຕິສະມາແລ້ວທີ່ມີຄ່າຄວນ ທີ່ຈະມີອິດທິພົນຂອງພຣະວິນຍານບໍລິສຸດເປັນເພື່ອນຕະຫລອດເວລາ. ຫລັງຈາກການຮັບບັບຕິສະມາຂອງບຸກຄົນເຂົ້າມາໃນສາດສະໜາຈັກທີ່ແທ້ຈິງຂອງພຣະເຢຊູຄຣິດແລ້ວ, ເຂົາຈະໄດ້ຮັບຂອງປະທານແຫ່ງພຣະວິນຍານບໍລິສຸດໂດຍການວາງມືຈາກບຸກຄົນທີ່ມີສິດອຳນາດຢ່າງຖືກຕ້ອງ (ກຈກ 8:12–25; ມຣນ 2; ຄພ 39:23). ການຮັບເອົາຂອງປະທານແຫ່ງພຣະວິນຍານບໍລິສຸດມັກຈະຖືກກ່າວເຖິງວ່າເປັນການຮັບບັບຕິສະມາໂດຍໄຟ (ມທ 3:11; ຄພ 19:31).

ມະນຸດໄດ້ຖືກບັນຊາໃຫ້ກັບໃຈ, ຮັບບັບຕິສະມາ, ແລະ ຮັບເອົາຂອງປະທານແຫ່ງພຣະວິນຍານບໍລິສຸດ, **ກຈກ** 2:38. ເປໂຕ ແລະ ໂຢຮັນ ໄດ້ມອບຂອງປະທານແຫ່ງພຣະວິນຍານບໍລິສຸດໂດຍການວາງມື, **ກຈກ** 8:14–22. ພຣະວິນຍານບໍລິສຸດໄດ້ຖືກມອບໃຫ້ໂດຍການວາງມື, **ກຈກ** 19:2–6.

ການປົດບາບມາເຖິງໂດຍໄຟ ແລະ ໂດຍພຣະວິນຍານບໍລິສຸດ, **2 ນຟ** 31:17.

ພວກເຮົາເຊື່ອໃນການວາງມືເພື່ອຮັບຂອງປະທານແຫ່ງພຣະວິນຍານບໍລິສຸດ, **ຫຼຊ** 1:4.

**ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ.** *ເບິ່ງ* ນະມັດສະການ; ພອນ, ໃຫ້ພອນ, ເປັນພອນ *ນຳອີກ*

ຄວາມກະຕັນຍູສຳລັບພອນທີ່ໄດ້ຮັບຈາກພຣະເຈົ້າ. ການສະແດງຄວາມກະຕັນຍູເປັນສິ່ງພໍພຣະໄທຕໍ່ພຣະເຈົ້າ, ແລະ ການນະມັດສະການທີ່ແທ້ຈິງແມ່ນຮ່ວມດ້ວຍການຂອບພຣະໄທພຣະອົງ. ເຮົາຄວນຂອບພຣະໄທພຣະຜູ້ເປັນເຈົ້າສຳລັບທຸກສິ່ງທັງປວງ.

ເປັນການດີແທ້ທີ່ໂມທະນາຂອບພຣະໄທພຣະຜູ້ເປັນເຈົ້າ, **ພສສ** 92:1. ຈົ່ງເຂົ້າມາເຝົ້າພຣະອົງດ້ວຍການໂມທະນາຂອບພຣະໄທ, **ພສສ** 95:1–2. ຈົ່ງຂອບພຣະໄທພຣະອົງ, ແລະ ສັນລະເສີນພຣະນາມຂອງພຣະອົງ, **ພສສ** 100.

ຈົ່ງໂມທະນາຂອບພຣະໄທຢູ່ບໍ່ຂາດ, **ອຟຊ** 1:15–16. ຈົ່ງມີໃຈກະຕັນຍູ, **ກລຊ** 3:15. ຄຳສັນລະເສີນ, ແລະ ສະຫງ່າລາສີ, ແລະ ຄຳໂມທະນາຂອບພຣະໄທ, ແລະ ກຽດຕິຍົດ ຈົ່ງເປັນຂອງພຣະເຈົ້າ, **ພນມ** 7:12.

ໂອ້ ພວກທ່ານຄວນຈະຂອບພຣະໄທກະສັດແຫ່ງສະຫວັນຂອງພວກທ່ານຫລາຍປານໃດນໍ, **ມຊຢ** 2:19–21. ໃຊ້ຊີວິດຢູ່ໃນການຂອບພຣະໄທທຸກໆມື້, **ແອວ** 34:38. ເວລາລູກຕື່ນຂຶ້ນຕອນເຊົ້າ ກໍຂໍໃຫ້ໃຈຂອງລູກເຕັມໄປດ້ວຍຄວາມຂອບພຣະໄທພຣະຜູ້ເປັນເຈົ້າ, **ແອວ** 37:37.

ເຈົ້າຄວນເຮັດທຸກສິ່ງດ້ວຍຄຳອະທິຖານ ແລະ ຄວາມຂອບພຣະໄທ, **ຄພ** 46:7. ເຈົ້າຕ້ອງຂອບພຣະໄທພຣະເຈົ້າ, **ຄພ** 46:32. ເຮັດສິ່ງເຫລົ່ານີ້ດ້ວຍຄວາມຂອບພຣະໄທ, **ຄພ** 59:15–21. ໄດ້ຮັບພອນນີ້ຈາກພຣະຫັດຂອງພຣະຜູ້ເປັນເຈົ້າ, ດ້ວຍໃຈທີ່ຮູ້ບຸນຄຸນ, **ຄພ** 62:7. ຄົນທີ່ຮັບເອົາທຸກສິ່ງທັງປວງດ້ວຍຄວາມຂອບພຣະໄທຈະຖືກເຮັດໃຫ້ຮຸ່ງເຮືອງ, **ຄພ** 78:19. ຈົ່ງຖວາຍຄວາມຂອບພຣະໄທໃນທຸກສິ່ງ, **ຄພ** 98:1 (1 ທສນ 5:18). ຈົ່ງສັນລະເສີນພຣະຜູ້ເປັນເຈົ້າດ້ວຍຄຳອະທິຖານທີ່ເປັນຄວາມສັນລະເສີນ ແລະ ຄວາມຂອບພຣະໄທ, **ຄພ** 136:28.

**ໄຂ່ມຸກອັນລ້ຳຄ່າ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ພຣະຄຳພີ; ວິໄນສາດສະໜາ *ນຳອີກ*

ອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ ເປັນເໝືອນດັ່ງ "ໄຂ່ມຸກອັນລ້ຳຄ່າ" (ມທ 13:45–46).

ໄຂ່ມຸກອັນລ້ຳຄ່າ ເປັນຊື່ໜຶ່ງຂອງພຣະຄຳພີສີ່ເຫລັ້ມ ທີ່ເອີ້ນວ່າ "ໜັງສືມາດຕະຖານ" ຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ. ໄຂ່ມຸກອັນລ້ຳຄ່າສະບັບທຳອິດໄດ້ຖືກຈັດພິມໃນປີ 1851 ແລະ ບັນຈຸບາງຕອນ ຊຶ່ງເວລານີ້ມີບັນຈຸຢູ່ໃນພຣະຄຳພີຄຳສອນ ແລະ ພັນທະສັນຍາ. ສະບັບທີ່ຈັດພິມ ນັບແຕ່ປີ 1902 ບັນຈຸ (1) ບົດຄວາມການແປຄວາມໝາຍພຣະທຳປະຖົມມະການຂອງໂຈເຊັບ ສະມິດ, ຖືກເອີ້ນວ່າ ໜັງສືໂມເຊ, ແລະ ໄດ້ແປມັດທາຍ 24, ຊຶ່ງຖືກເອີ້ນວ່າ ໂຈເຊັບ ສະມິດ—ມັດທາຍ; (2) ການແປໜັງສືເອຢິບໃນເຈ້ຍພາໄພລັດຈຳນວນໜຶ່ງຂອງໂຈເຊັບ ສະມິດ ທີ່ເພິ່ນໄດ້ມັນມາໃນປີ 1835, ຖືກເອີ້ນວ່າ ໜັງສືອັບຣາຮາມ; (3) ບົດຄວາມຈາກການບັນທຶກຂອງໂຈເຊັບ ສະມິດ ກ່ຽວກັບປະຫວັດສາດຂອງສາດສະໜາຈັກ ທີ່ເພິ່ນໄດ້ຂຽນໃນປີ 1838, ຖືກເອີ້ນວ່າ ໂຈເຊັບ ສະມິດ—ປະຫວັດ; ແລະ (4) ຫລັກແຫ່ງຄວາມເຊື່ອ, ສິບສາມຂໍ້ແຫ່ງຄວາມເຊື່ອ ແລະ ຄຳສອນ.

**ເຂົ້າໃຈ, ຄວາມເຂົ້າໃຈ.** *ເບິ່ງ* ຄວາມຮູ້; ຈິງ, ຄວາມຈິງ; ສະຕິປັນຍາ *ບຳອີກ*

ການມີຄວາມຮູ້ເຖິງ ຫລື ການໄດ້ຮັບຄວາມໝາຍຂອງບາງສິ່ງທີ່ເປັນຄວາມຈິງ, ລວມທັງການນຳໃຊ້ມັນໃນຊີວິດ.

ຢ່າເຊື່ອໝັ້ນຈັກເທື່ອໃນສິ່ງທີ່ເຈົ້າຄິດວ່າເຈົ້າຮູ້ຈັກ, **ສພສ** 3:5. ຈົ່ງຫາເອົາປັນຍາໃຫ້ໄດ້, **ສພສ** 4:7.

ພຣະເຢຊູໄດ້ກ່າວເປັນຄຳອຸປະມາ ແລະ ບາງຄົນບໍ່ເຂົ້າໃຈ, **ມທ** 13:12–17. ພຣະຜູ້ເປັນເຈົ້າໄດ້ເປີດຈິດໃຈຂອງພວກເພິ່ນໃຫ້ເຂົ້າໃຈ, **ລກ** 24:45.

ຖ້າຫາກພວກທ່ານບໍ່ເຂົ້າໃຈຂໍ້ຄວາມນີ້, ມັນກໍເປັນເພາະພວກທ່ານບໍ່ທູນຖາມ, **2 ນຟ** 32:4 (3 ນຟ 17:3). ບັນທຶກໄດ້ຖືກຮັກສາໄວ້ ເພື່ອວ່າພວກເຮົາຈະໄດ້ອ່ານ ແລະ ເຂົ້າໃຈ, **ມຊຢ** 1:2–5. ເປັນຍ້ອນຄວາມບໍ່ເຊື່ອຖືຂອງພວກເຂົາ, ພວກເຂົາຈຶ່ງບໍ່ເຂົ້າໃຈພຣະຄຳຂອງພຣະເຈົ້າ, **ມຊຢ** 26:3. ເຂົາເຈົ້າເປັນຄົນມີຄວາມເຂົ້າໃຈຢ່າງເລິກຊຶ້ງ, **ແອວ** 17:2–3. ພຣະຄຳເລີ່ມເຮັດໃຫ້ຄວາມເຂົ້າໃຈຂອງເຮົາສະຫວ່າງຂຶ້ນ, **ແອວ** 32:28.

ໃຫ້ພວກເຮົາມາເຈລະຈານຳກັນ ເພື່ອວ່າພວກເຈົ້າຈະເຂົ້າໃຈ, **ຄພ** 50:10–12, 19–23. ພໍ່ແມ່ຕ້ອງສອນລູກໆຂອງພວກເຂົາໃຫ້ເຂົ້າໃຈ, **ຄພ** 68:25. ວຽກງານ ແລະ ສິ່ງລີ້ລັບຂອງພຣະເຈົ້າ ພຽງແຕ່ສາມາດເຂົ້າໃຈໂດຍພຣະວິນຍານສັກສິດເທົ່ານັ້ນ, **ຄພ** 76:114–116. ຊາຕານພະຍາຍາມທັນຫົວໃຈຂອງມະນຸດໄປຈາກຄວາມເຂົ້າໃຈ, **ຄພ** 78:10. ຄວາມສະຫວ່າງຂອງພຣະຄຣິດໄດ້ໃຫ້ຊີວິດຊີວາແກ່ຄວາມເຂົ້າໃຈຂອງພວກເຮົາ, **ຄພ** 88:11.

**ເຂົ້ານົກ**

ຫຍ້າ ຫລື ເມັດພືດທີ່ເປັນພິດ ຊຶ່ງຄ້າຍຄືກັນກັບເຂົ້າຫວີດ. ບໍ່ສາມາດແຍກອອກຈາກກັນຈົນກວ່າເຖິງເວລາເກັບກ່ຽວເຂົ້າຫວີດ (ມທ 13:24–30; ຄພ 86:1–7).

**ເຂົ້າແລງຂອງພຣະຜູ້ເປັນເຈົ້າ.** *ເບິ່ງ* ສິນລະລຶກ

**ເຂົ້າແລງຄາບສຸດທ້າຍ.** *ເບິ່ງ* ສິນລະລຶກ; ປັດສະຄາ *ບຳອີກ*

ອີງຕາມພຣະຄຳພີໃໝ່, ເຂົ້າແລງຄາບສຸດທ້າຍທີ່ພຣະເຢຊູໄດ້ຮັບປະທານ ກ່ອນພຣະອົງຖືກຈັບ ແລະ ຖືກຄຶງ (ລກ 22:14–18). ພຣະອົງ ແລະ ອັກຄະສາວົກສິບສອງຄົນຂອງພຣະອົງ ໄດ້ກິນເຂົ້າແລງຄາບນີ້ໃນລະຫວ່າງງານປັດສະຄາ (ມທ 26:17–30; ມຣກ 14:12–18; ລກ 22:7–13).

ພຣະຜູ້ຊ່ວຍໃຫ້ລອດໄດ້ອວຍພອນເຂົ້າຈີ່ ແລະ ນ້ຳອະງຸ່ນ ແລ້ວໄດ້ມອບມັນໃຫ້ແກ່ອັກຄະສາວົກ, **ມທ** 26:26–29 (ມຣກ 14:22–25; ລກ 22:7–20). ພຣະເຢຊູໄດ້ລ້າງຕີນໃຫ້ແກ່ພວກອັກຄະສາວົກ, **ຢຮ** 13. ຢູດາໄດ້ຖືກເອີ້ນວ່າເປັນຜູ້ທໍລະຍົດຕໍ່ພຣະເຢຊູ, **ຢຮ** 13:21–26 (ມທ 26:20–25).

**ຄັງ.** *ເບິ່ງ* ຄວາມຜາສຸກ *ບຳອີກ*

ສະຖານທີ່ ບ່ອນທີ່ອະທິການໄດ້ຮັບ, ໄດ້ຖືກ

ຮັກສາໄວ້, ແລະ ເບີກສິ່ງຂອງທີ່ໄພ່ພົນຍຸກສຸດທ້າຍບໍລິຈາກດ້ວຍຄວາມອຸທິດຖວາຍ ໃຫ້ແກ່ຄົນຍາກຈົນ. ຄັງແຕ່ລະບ່ອນ ອາດໃຫຍ່ນ້ອຍຕາມແຕ່ສະພາບການຮຽກຮ້ອງ. ໄພ່ພົນຂອງພຣະເຈົ້າທີ່ຊື່ສັດ ໄດ້ບໍລິຈາກພອນສະຫວັນ, ຄວາມຊຳນານ, ວັດຖຸປະສົງ, ແລະ ຊັບສິນທາງການເງິນ ໃຫ້ແກ່ອະທິການ ເພື່ອດູແລຄົນຍາກຈົນ ໃນເວລາທີ່ຂັດສົນ. ສະນັ້ນ, ຄັງອາດຮ່ວມດ້ວຍ ລາຍການ ການຮັບໃຊ້ບໍລິການ, ເງິນ, ອາຫານ, ຫລື ເຄື່ອງຂອງອື່ນໆທີ່ມີໄວ້ໃຫ້. ອະທິການເປັນຕົວແທນຂອງຄັງ ແລະ ການບໍລິຈາກສິ່ງຂອງ ແລະ ການຮັບໃຊ້ ຕາມທີ່ຕ້ອງການ ແລະ ຕາມການຊີ້ນຳຈາກພຣະວິນຍານຂອງພຣະຜູ້ເປັນເຈົ້າ (ຄພ 42:29–36; 82:14–19).

ໃຫ້ເກັບເອົາຜົນລະປູກໄວ້ ເພື່ອເປັນເຄື່ອງບັນເທົາທຸກເວລາມີຄວາມອຶດຢາກໃນໄລຍະເຈັດປີ, **ປຖກ** 41:34–36, 46–57. ຈົ່ງນຳເງິນເຕັມຈຳນວນໜຶ່ງສ່ວນສິບມາຍັງຄັງ, **ມລກ** 3:10 (3 ນຟ 24:10).

ໃຫ້ອະທິການກຳນົດຄັງແຫ່ງໜຶ່ງໃຫ້ແກ່ສາດສະໜາຈັກໜ່ວຍນີ້, **ຄພ** 51:13. ສິ່ງຂອງທີ່ເຫລືອ ຄວນມອບມັນເຂົ້າຄັງຂອງເຮົາ, **ຄພ** 70:7–8. ໄພ່ພົນຂອງພຣະເຈົ້າຄວນຈັດຕັ້ງ ແລະ ສະຖາປະນາຄັງຂຶ້ນ, **ຄພ** 78:1–4. ເດັກນ້ອຍມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫລືອຈາກຄັງຂອງພຣະຜູ້ເປັນເຈົ້າ ຖ້າຫາກວ່າພໍ່ແມ່ຂອງພວກເຂົາບໍ່ມີສິ່ງໃດທີ່ຈະມອບໃຫ້, **ຄພ** 83:5.

**ຄັບຣີເອນ.** *ເບິ່ງ* ທູດ, ເທວະດາ; ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ; ມາຣີ, ມານດາຂອງພຣະເຢຊູ *ນຳອີກ*

ທູດອົງໜຶ່ງທີ່ສົ່ງມາຫາດານີເອນ (ດນອ 8:16; 9:21), ຊາຂາຣີຢາ (ລກ 1:11–19; ຄພ 27:7), ມາຣີ (ລກ 1:26–38), ແລະ ຄົນອື່ນໆ (ຄພ 128:21). ສາດສະດາໂຈເຊັບ ສະມິດ ໄດ້ບອກວ່າຄັບຣີເອນ ແມ່ນສາດສະດາໂນອາໃນພຣະຄຳພີເດີມ.

**ຄາດຕະກຳ, ການຄາດຕະກຳ.** *ເບິ່ງ* ກາອິນ; ໂທດປະຫານຊີວິດ *ນຳອີກ*

ການຂ້າຄົນດ້ວຍເຈດຕະນາ ແລະ ບໍ່ຍຸດຕິທຳ. ການຄາດຕະກຳເປັນການບາບທີ່ກ່າວໂທດນັບແຕ່ດຶກດຳບັນ (ປຖກ 4:1–12; ມຊ 5:18–41).

ຜູ້ໃດກໍຕາມທີ່ຂ້າເພື່ອນມະນຸດ ກໍຈະຖືກເພື່ອນມະນຸດຄົນອື່ນຂ້າເໝືອນກັນ, **ປຖກ** 9:6 (ປຈສ, ປຖກ 9:12–13; ອພຍ 21:12; ແອວ 34:12). ຢ່າຂ້າຄົນ, **ອພຍ** 20:13 (ພບຍ 5:17; ມທ 5:21–22; ມຊຢ 13:21; ຄພ 59:6).

ພຣະເຢຊູໄດ້ກ່າວວ່າ, ຢ່າຂ້າຄົນ, **ມທ** 19:18. ຜູ້ຂ້າຄົນຈະໄດ້ຮັບພາກສ່ວນຂອງເຂົາໃນຄວາມຕາຍຄັ້ງທີສອງ, **ພນມ** 21:8.

ພວກເຈົ້າຈົ່ງມີໃຈເປັນຄາດຕະກອນ, **1 ນຟ** 17:44. ວິບັດແກ່ຄາດຕະກອນທີ່ຂ້າຄົນໂດຍເຈດຕະນາ, **2 ນຟ** 9:35. ພຣະຜູ້ເປັນເຈົ້າໄດ້ບັນຊາວ່າ ມະນຸດຈະບໍ່ເຮັດການຄາດຕະກຳ, **2 ນຟ** 26:32. ການຄາດຕະກຳເປັນສິ່ງທີ່ໜ້າກຽດຊັງຕໍ່ພຣະຜູ້ເປັນເຈົ້າ, **ແອວ** 39:5–6.

ຄົນທີ່ຂ້າຄົນຈະບໍ່ໄດ້ຮັບການໃຫ້ອະໄພ, **ຄພ** 42:18. ຄົນໃດທີ່ຂ້າຄົນຈະຖືກສົ່ງໄປຕາມກົດໝາຍຂອງແຜ່ນດິນ, **ຄພ** 42:79.

**ຄາລະວະ, ຄວາມຄາລະວະ.** *ເບິ່ງ* ຢ້ານກົວ, ຄວາມຢ້ານກົວ; ໃຫ້ກຽດ *ນຳອີກ*

ຄວາມນັບຖືທີ່ເລິກຊຶ້ງຕໍ່ສິ່ງທີ່ສັກສິດ; ຄວາມປະຫລາດໃຈ.

ພຣະຜູ້ເປັນເຈົ້າໄດ້ບັນຊາໂມເຊໃຫ້ຖອດເກີບອອກ, ເພາະວ່າເພິ່ນກຳລັງຢືນຢູ່ທີ່ບ່ອນສັກສິດ, **ອພຍ** 3:4–5. ພຣະເຈົ້າເປັນທີ່ຢ້ານກົວ ແລະ ເກງກົວສຸດຂີດ, **ພສສ** 89:7.

ບົວລະບັດພຣະເຈົ້າດ້ວຍຄວາມເຄົາລົບຢຳເກງ, **ຮຣ** 12:28.

ໂມໂຣໄນກົ້ມຂາບລົງພື້ນດິນ, ແລະ ອະທິຖານຢ່າງສຸດກຳລັງ, **ແອວ** 46:13. ຝູງຊົນກໍໄດ້ລົ້ມລົງຢູ່ກັບພື້ນດິນ ແລະ ໄດ້ນະມັດສະການພຣະຄຣິດ, **3 ນຟ** 11:12–19.

ກົ້ມຂາບລົງຕໍ່ໜ້າເຮົາ, **ຄພ** 5:24. ທຸກສິ່ງກົ້ມຂາບລົງຢ່າງຖ່ອມຕົວດ້ວຍຄວາມຄາລະວະຢູ່ຕໍ່ໜ້າບັນລັງຂອງພຣະເຈົ້າ, **ຄພ** 76:93. ຈິດໃຈຂອງພວກເຈົ້າຖືກເຮັດໃຫ້ມືດມົນ ເພາະພວກເຈົ້າໄດ້ເຮັດຫລິ້ນໆກັບສິ່ງທີ່ພວກເຈົ້າໄດ້ຮັບ,

**ຄພ** 84:54–57. ທຸກຫົວເຂົ່າຈະຄຸລົງ ແລະ ທຸກລີ້ນຈະສາລະພາບ, **ຄພ** 88:104. ເນື່ອງຈາກຄວາມນັບຖື ຫລື ຄວາມຄາລະວະຕໍ່ພຣະນາມຂອງພຣະຜູ້ສູງສຸດ, ສາດສະໜາຈັກຈຶ່ງໄດ້ເອີ້ນຖານະປະໂລຫິດນັ້ນຕາມເມນຄີເສເດັກ, **ຄພ** 107:4. ພອນຈະຖືກຖອກເທລົງມາເທິງຄົນທີ່ນອບນ້ອມຄາລະວະພຣະຜູ້ເປັນເຈົ້າຢູ່ໃນບ້ານຂອງພຣະອົງ, **ຄພ** 109:21.

## ຄາລີເລ

ໃນສະໄໝບູຮານ ແລະ ສະໄໝໃໝ່, ອະນາເຂດທາງພາກເໜືອຂອງອິດສະຣາເອນເກືອບທັງໝົດ ທີ່ຢູ່ທາງພາກຕາເວັນຕົກຂອງແມ່ນ້ຳຈໍແດນ ແລະ ທະເລຄາລີເລ. ຄາລີເລມີຄວາມຍາວປະມານຫົກສິບໄມ (ເກົ້າສິບເຈັດ ກິໂລແມັດ) ມີຄວາມກວ້າງສາມສິບໄມ (ສີ່ສິບແປດກິໂລແມັດ). ໃນສະໄໝບູຮານ, ມັນບັນຈຸແຜ່ນດິນບ່ອນທີ່ດີທີ່ສຸດບາງຕອນ ແລະ ເປັນເມືອງທີ່ອັ່ງອໍໄປດ້ວຍຜູ້ຄົນຂອງອິດສະຣາເອນ. ທາງຫລວງທີ່ສຳຄັນຊຶ່ງພາໄປຫາດາມັສກັດ, ເອຢິບ, ແລະ ອິດສະຣາເອນພາກຕາເວັນອອກແມ່ນຜ່ານໄປທາງຄາລີເລ. ອາກາດທີ່ດີເລີດ ແລະ ດິນທີ່ອຸດົມສົມບູນຊ່ວຍໃຫ້ຕົ້ນໝາກກອກເທດ, ເຂົ້າຫວີດ, ເຂົ້າບາເລ, ແລະ ຕົ້ນໝາກອະງຸ່ນຜະລິດໝາກຜົນທີ່ໃຫຍ່ໂຕ. ການປະມຸງຢູ່ໃນທະເລຄາລີເລກໍໃຫ້ຜົນດີຫລາຍທີ່ສາມາດສົ່ງອອກຂາຍນອກປະເທດ ແລະ ເປັນແຫລ່ງທີ່ສຳຄັນຂອງຄວາມລ້ຳລວຍ. ພຣະຜູ້ຊ່ວຍໃຫ້ລອດໄດ້ໃຊ້ເວລາຢ່າງຫລວງຫລາຍຂອງພຣະອົງຢູ່ໃນແຂວງຄາລີເລ.

ຄວາມສະຫວ່າງອັນຍິ່ງໃຫຍ່ຈະຮຸ່ງແຈ້ງໃນຄາລີເລ, **ອຊຢ** 9:1–3 (2 ນຟ 19:1–3).

ພຣະເຢຊູໄດ້ເດີນທາງໄປທົ່ວແຂວງຄາລີເລສິດສອນ, ປະກາດ, ແລະ ປິ່ນປົວ, **ມທ** 4:23. ຫລັງຈາກພຣະເຢຊູໄດ້ຟື້ນຄືນພຣະຊົນແລ້ວ, ພຣະອົງໄດ້ປະກົດຢູ່ໃນແຂວງຄາລີເລ, **ມຣກ** 14:28 (ຢຮ 21:1–14). ຂ່າວເລື່ອງພຣະເຢຊູໄດ້ຊ່າລືໄປທົ່ວຂົງເຂດຄາລີເລ, **ລກ** 4:14. ພຣະເຢຊູໄດ້ເຮັດສິ່ງມະຫັດສະຈັນຢູ່ທີ່ບ້ານການາແຂວງຄາລີເລ, **ຢຮ** 2:11.

*ທະເລຄາລີເລ:* ທະເລຄາລີເລຕັ້ງຢູ່ໃນພາກເໜືອຂອງປະເທດອິດສະຣາເອນ. ມັນກໍຖືກເອີ້ນວ່າທະເລກິນເນເຣດນຳອີກ ໃນພຣະຄຳພີເດີມ ແລະ ທະເລສາບເຄັນເນສາເຣັດ ຫລື ຕີເບເຣຍໃນພຣະຄຳພີໃໝ່. ພຣະເຢຊູໄດ້ເທດສະໜາຫລາຍເທື່ອຢູ່ທີ່ນັ້ນ (ມທ 13:2). ທະເລນັ້ນເປັນຮູບຄືນ້ຳເຕົ້າ, ຍາວ 12.5 ໄມ (20 ກິໂລແມັດ) ແລະ ກວ້າງ 7.5 ໄມ (12 ກິໂລແມັດ) ໃນບ່ອນທີ່ກວ້າງສຸດ. ມັນຕ່ຳກວ່າໜ້ານ້ຳທະເລ 680 ຟີດ (207 ແມັດ), ຊຶ່ງເຮັດໃຫ້ອາກາດຢູ່ທີ່ນັ້ນມັກຈະຮ້ອນອົບເອົ້າຫລາຍ. ອາກາດທີ່ໜາວເຢັນຈະລົງມາຈາກຄ້ອຍສູງ ແລະ ປະທະໃສ່ກັບແອຮ້ອນຢູ່ເທິງໜ້ານ້ຳ ແລ້ວມັກຈະເຮັດໃຫ້ເກີດຝົນຕົກຟ້າລົມກະທັນຫັນ (ລກ 8:22–24).

**ຄາວາຣີ.** *ເບິ່ງ* ໂຄລະໂຄທາ

## ຄາວເດີຣີ, ອໍລີເວີ

ແອວເດີຄົນທີສອງຂອງສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່ ແລະ ເປັນຄົນໜຶ່ງໃນພະຍານສາມຄົນ ຕໍ່ທີ່ມາ ແລະ ເຖິງຄວາມຈິງແທ້ຂອງພຣະຄຳພີມໍມອນ. ເພິ່ນໄດ້ເປັນຜູ້ຂຽນໃນຂະນະທີ່ໂຈເຊັບ ສະມິດ ແປ ພຣະຄຳພີມໍມອນຈາກແຜ່ນຈາລຶກຄຳ (ຈສ—ປ 1:66–68).

ໄດ້ຮັບການເປັນພະຍານເຖິງຄວາມຈິງເລື່ອງການແປພຣະຄຳພີມໍມອນ, **ຄພ** 6:17, 22–24. ໄດ້ຖືກແຕ່ງຕັ້ງໂດຍໂຢຮັນບັບຕິສະໂຕ, **ຄພ** 13 (ຄພ 27:8; ຈສ—ປ 1:68–73, ເບິ່ງ ໝາຍເຫດສຳລັບຂໍ້ທີ 71). ຫລັງຈາກພວກເຈົ້າໄດ້ຮັບສັດທາ ແລະ ໄດ້ເຫັນມັນດ້ວຍຕາຂອງພວກເຈົ້າ, ພວກເຈົ້າຈະເປັນພະຍານວ່າ ພວກເຈົ້າໄດ້ເຫັນສິ່ງເຫລົ່ານີ້, **ຄພ** 17:3, 5. ເຮົາໄດ້ສະແດງໃຫ້ປະຈັກແກ່ເຈົ້າ, ໂດຍພຣະວິນຍານຂອງເຮົາໃນຫລາຍຄັ້ງ, ວ່າເລື່ອງທີ່ເຈົ້າໄດ້ຂຽນໄວ້ເປັນຄວາມຈິງ, **ຄພ** 18:2. ໄດ້ຖືກກຳນົດ ແລະ ຖືກແຕ່ງຕັ້ງໃຫ້ເປັນຜູ້ພິທັກຮັກສາການເປີດເຜີຍ, **ຄພ** 70:3. ໄດ້ຮັບຂໍກະແຈແຫ່ງຖານະປະໂລຫິດນຳໂຈເຊັບສະມິດ, **ຄພ** 110.

**ຄ່າຄວນ, ການມີຄ່າຄວນ.** *ເບິ່ງ* ຊອບທຳ, ຄວາມຊອບທຳ *ນຳອີກ*

ການເປັນຄົນຊອບທຳ ແລະ ໄດ້ຮັບການຮັບຮູ້ໃນພຣະເນດຂອງພຣະເຈົ້າ ແລະ ຜູ້ທີ່ໄດ້ຖືກແຕ່ງຕັ້ງໄວ້ໃຫ້ເປັນຜູ້ນຳ.

ຜູ້ທີ່ບໍ່ຮັບເອົາໄມ້ກາງແຂນຂອງຕົນ ກໍບໍ່ສົມຄວນເປັນສາວົກຂອງເຮົາ, **ມທ** 10:38. ຄົນງານກໍຄວນຈະໄດ້ຮັບຄ່າແຮງງານຂອງຕົນ, **ລກ** 10:7 (ຄພ 31:5).

ຈົ່ງເບິ່ງວ່າທ່ານຈະເຮັດທຸກສິ່ງທຸກຢ່າງດ້ວຍຄວາມມີຄ່າຄວນ, **ມມ** 9:29. ພວກເຂົາຈະບໍ່ໄດ້ຮັບບັບຕິສະມາ ນອກຈາກວ່າພວກເຂົາມີຄ່າຄວນ, **ມຣນ** 6:1.

ຄົນທີ່ກຽດຄ້ານຈະບໍ່ຖືກນັບວ່າມີຄ່າຄວນທີ່ຈະຢືນຢູ່, **ຄພ** 107:100. ຄົນໃດທີ່ບໍ່ອົດທົນກັບການຕີສອນ ຄົນໆນັ້ນກໍບໍ່ມີຄ່າຄວນພໍສຳລັບອານາຈັກຂອງເຮົາ, **ຄພ** 136:31. ຖານະປະໂລຫິດໄດ້ຖືກມອບໃຫ້ແກ່ສະມາຊິກຜູ້ຊາຍທີ່ມີຄ່າຄວນທຸກຄົນ, **ຂປ** 2.

**ຄິດຄູເມັນ.** *ເບິ່ງ* ພວກໂຈນແກດີອານທັນ *ນຳອີກ*

ໃນພຣະຄຳພີມໍມອນ, ຫົວໜ້າຂອງກຸ່ມຄົນຊົ່ວ ຊຶ່ງຕໍ່ມາໄດ້ຮູ້ຈັກກັນວ່າ ພວກໂຈນແກດີອານທັນ (ຮລມ 1:9–12; 2).

**ຄິດໄຕ່ຕອງ.** *ເບິ່ງ* ໄຕ່ຕອງ

**ຄິມໂບ, ສະເປັນເຊີ ດັບເບິນຢູ.** *ເບິ່ງ* ຂໍ້ປະກາດຢ່າງເປັນທາງການ 2 *ນຳອີກ*

ປະທານຄົນທີສິບສອງຂອງສາດສະໜາຈັກ ນັບແຕ່ມັນໄດ້ຖືກຈັດຕັ້ງຂຶ້ນໃນປີ 1830. ສະເປັນເຊີ ດັບເບິນຢູ ຄິມໂບ ໄດ້ຮັບໃຊ້ເປັນປະທານຈາກ ເດືອນທັນວາ ປີ 1973 ເຖິງເດືອນພະຈິກ 1985. ເພິ່ນໄດ້ເກີດໃນປີ 1895 ແລະ ໄດ້ເສຍຊີວິດໄປໃນປີ 1985 ຕອນມີອາຍຸໄດ້ເກົ້າສິບປີ.

ໃນເດືອນມິຖຸນາ 1978, ຝ່າຍປະທານສູງສຸດໄດ້ປະກາດວ່າ ປະທານຄິມໂບໄດ້ຮັບການເປີດເຜີຍ ວ່າໃຫ້ມອບຖານະປະໂລຫິດ ແລະ ພອນຂອງພຣະວິຫານໃຫ້ສະມາຊິກຜູ້ຊາຍທີ່ມີຄ່າຄວນທຸກຄົນ, **ຂປ** 2.

**ຄຶງ, ການຄຶງ.** *ເບິ່ງ* ໂຄລະໂຄທາ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ໄມ້ກາງແຂນ *ນຳອີກ*

ເປັນແບບແຜນຂອງການຄຶງຂອງຊາວໂຣມ, ປະຕິບັດກັນລະຫວ່າງສະໄໝຂອງພຣະຄຳພີໃໝ່, ຊຶ່ງດ້ວຍວິທີດັ່ງກ່າວ ບຸກຄົນຈະຖືກປະຫານ ໂດຍການຖືກມັດ ຫລື ຕອກດ້ວຍຕະປູໃສ່ໃນມື ແລະ ຕີນໄວ້ເທິງໄມ້ກາງແຂນ. ຕາມປົກກະຕິແລ້ວສິ່ງນີ້ຈະກະທຳຕໍ່ຂ້າທາດ ແລະ ໂທດອາຊະຍາກຳທີ່ຕ່ຳທີ່ສຸດ. ກ່ອນຈະຖືກຄຶງບຸກຄົນໄດ້ຖືກຂ້ຽນຕີ ຫລື ຖືກລົງໂທດຢ່າງໜັກ (ມຣກ 15:15). ຕາມປົກກະຕິແລ້ວ ຜູ້ທີ່ຈະຖືກຄຶງຕ້ອງໄດ້ແບກໄມ້ກາງແຂນຂອງຕົນໄປຫາບ່ອນຄຶງ (ຢຮ 19:16–17). ເຄື່ອງນຸ່ງຂອງເຂົາຈະຖືກພວກທະຫານທີ່ສັ່ງປະຫານຍຶດເອົາໄປ (ມທ 27:35). ໄມ້ກາງແຂນຈະຖືກຕອກລົງພື້ນດິນ ເພື່ອວ່າຕີນຂອງຜູ້ຖືກຄຶງຈະຢູ່ສູງກວ່າໜ້າດິນພຽງແຕ່ໜຶ່ງສອກ ຫລື ສອງສອກເທົ່ານັ້ນ. ພວກທະຫານຈະເຝົ້າຍາມໄມ້ກາງແຂນຈົນກວ່າ ຜູ້ຖືກຄຶງໄດ້ຕາຍໄປ, ຊຶ່ງບາງເທື່ອອາດເຖິງສາມມື້ (ຢຮ 19:31–37).

ພຣະເຢຊູຄຣິດໄດ້ຖືກຄຶງ ເພາະວ່າພຣະອົງຖືກຜູ້ຄົນທີ່ບໍ່ເຊື່ອກ່າວຫາວ່າພຣະອົງກະບົດຕໍ່ຕ້ານກາຍຊາ ແລະ ໝິ່ນປະໝາດ ເພາະວ່າພຣະອົງໄດ້ກ່າວວ່າພຣະອົງເປັນພຣະບຸດຂອງພຣະເຈົ້າ. ເສື້ອຄຸມສີມ້ວງ (ຢຮ 19:2), ມົງກຸດໜາມ, ແລະ ສິ່ງໃຊ້ເຢາະເຢີ້ຍອື່ນໆ ໄດ້ຖືກມອບໃຫ້ແກ່ພຣະເຢຊູ (ມທ 26:67; ມຣກ 14:65).

ກຸ່ມຄົນຊົ່ວຈະແທງພຣະຫັດ ແລະ ພຣະບາດຂອງພຣະເມຊີອາ, **ພສສ** 22:11–18. ພຣະຄຣິດຈະໄປດັ່ງລູກແກະພວມຖືກນຳໄປຂ້າ, **ອຊຢ** 53:7.

ພຣະເຢຊູໄດ້ບອກລ່ວງໜ້າເຖິງການຄຶງຂອງພຣະອົງ, **ມທ** 20:18–19. ການຄຶງຂອງພຣະຄຣິດໄດ້ຖືກບັນຍາຍໄວ້, **ມທ** 27:22–50 (ມຣກ 15:22–37; ລກ 23:26–46; ຢຮ 19:17–30).

ນີໄຟໄດ້ເຫັນພາບນິມິດກ່ຽວກັບການຄຶງ

ຂອງ ພຣະ ເມສາ ນ້ອຍ ຂອງ ພຣະ ເຈົ້າ, **1 ນຟ** 11:33. ນີໄຟ ໄດ້ ບອກ ເຖິງ ການ ຮັບ ທຸກ ທໍ ລະ ມານ ແລະ ການ ຄຶງ ຂອງ ພຣະ ຄຣິດ, **1 ນຟ** 19:9–14. ຢາໂຄບໄດ້ບອກເຖິງການປະຕິບັດສາດສະໜາກິດ ແລະ ການຄຶງຂອງພຣະຜູ້ບໍລິສຸດຂອງອິດສະຣາເອນ, **2 ນຟ** 6:9. ພະຍຸຝົນຟ້າຄະນອງ, ແຜ່ນດິນໄຫວ, ໄຟໄໝ້, ລົມບ້າໝູໃນອາເມຣິກາເປັນຫລັກຖານເຖິງການຄຶງຂອງພຣະຄຣິດຢູ່ເຢຣູຊາເລັມ, **3 ນຟ** 8.

ເຮົາຄືພຣະເຢຊູຜູ້ຖືກຄຶງ, **ຄພ** 45:51–52. ການປະຕິບັດສາດສະໜາກິດຂອງພຣະຄຣິດໃນບັນດາຜູ້ຄົນທີ່ໄດ້ຕາຍ ໄປນັ້ນຖືກຈຳກັດເວລາສັ້ນໆ ຊຶ່ງເປັນໄປໃນລະຫວ່າງການຄຶງ ແລະ ການຟື້ນຄືນພຣະຊົນຂອງພຣະອົງ, **ຄພ** 138:27.

**ຄຸກຂອງວິນຍານ.** *ເບິ່ງ* ນະລົກ

**ຄຸກຄາດເທດ (ສະຫະລັດອາເມຣິກາ).** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ສະມິດ, ໄຮຣຳ *ນຳອີກ*

ໂຈເຊັບ ແລະ ໄຮຣຳ ສະມິດ ໄດ້ຖືກກຸ່ມອັນ ຕະພານ ຂ້າ ຕາຍ ໃນວັນທີ 27 ເດືອນ ມິຖຸນາ, 1844, ຢູ່ ທີ່ຄຸກ ໃນ ເມືອງຄາດ ເທດ, ລັດອິລິນອຍ, ສະຫະລັດອາເມຣິກາ (ຄພ 135).

**ຄຸກລິເບີຕີ, ລັດມີເຊີຣີ (ສະຫະລັດອາເມຣິກາ).** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ຄຸກນ້ອຍແຫ່ງໜຶ່ງບ່ອນທີ່ສາດສະດາໂຈເຊັບ ສະມິດ ແລະ ຄົນອື່ນໆໄດ້ຖືກຂັງໄວ້ໃນນັ້ນຢ່າງບໍ່ຍຸດຕິທຳ ຈາກເດືອນພະຈິກ ປີ 1838 ເຖິງ ເດືອນ ເມສາ ປີ 1839. ໃນຂະນະທີ່ຕົກຢູ່ໃນສະພາບການທີ່ທຸກຍາກລຳບາກນັ້ນ, ໂຈເຊັບໄດ້ຮັບການເປີດເຜີຍບາງຢ່າງໂດຍສະເພາະ, ໄດ້ທຳນາຍ, ແລະ ໄດ້ຮັບການດົນໃຈໃຫ້ຂຽນຈົດໝາຍທີ່ສຳຄັນເຖິງໄພ່ພົນຂອງພຣະເຈົ້າ, ຖ້ອຍຄຳທີ່ຄັດເລືອກອອກມາໄດ້ຖືກບັນຈຸຢູ່ໃນພຣະຄຳພີຄຳສອນ ແລະ ພັນທະສັນຍາ 121–123.

**ຄຸນນະທຳ.** *ເບິ່ງ* ຊື່ສັດ, ຄວາມຊື່ສັດ; ພົມມະຈັນ; ອຳນາດ *ນຳອີກ*

ຄວາມຊື່ສັດ ແລະ ຄວາມດີເດັ່ນທາງສິນທຳ, ອຳນາດ ແລະ ພະລັງ (ລກ 8:46), ຫລື ຄວາມບໍລິສຸດທາງເພດ (ມຣນ 9:9).

ເຈົ້າເປັນຄົນດີ, **ນຣ** 3:11. ພວກທີ່ມີສະອາດ ແລະ ໃຈບໍລິສຸດ ຈະໄດ້ເຂົ້າໄປໃນພຣະວິຫານທີ່ສັກສິດຂອງພຣະຜູ້ເປັນເຈົ້າ, **ພສສ** 24:3–4. ເມຍທີ່ດີນຳກຽດສັກສີມາສູ່ຜົວ, **ສພສ** 12:4. ຄຸນຄ່າຂອງຍິງທີ່ມີຄຸນນະທຳ ແມ່ນເກີນກວ່າເພັດນິນຈິນດາ, **ສພສ** 31:10–31.

ເອົາຄຸນນະທຳເພີ່ມຄວາມເຊື່ອ, **2 ປຕ** 1:5 (ຄພ 4:6).

ທົດລອງຄຸນນະທຳແຫ່ງພຣະຄຳຂອງພຣະເຈົ້າ, **ແອວ** 31:5.

ໃຫ້ ຄຸນ ນະ ທຳ ປະ ດັບ ຄວາມນຶກຄິດ ຂອງທ່ານຢ່າງບໍ່ເສື່ອມຄາຍ, **ຄພ** 121:45.

ພວກ ເຮົາ ເຊື່ອ ໃນການ ມີ ຄຸນ ນະທຳ, **ຫຼຊ** 1:13 (ຟລປ 4:8).

**ຄູສອນ, ຖານະປະໂລຫິດແຫ່ງອາໂຣນ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ *ນຳອີກ*

ຕຳແໜ່ງໃນຖານະປະໂລຫິດແຫ່ງອາໂຣນ

ໜ້າທີ່ຂອງຄູສອນຄື ດູແລສາດສະໜາຈັກ, **ຄພ** 20:53–60. ຕຳແໜ່ງຂອງຄູສອນ ເປັນສ່ວນປະກອບທີ່ຈຳເປັນຂອງຖານະປະໂລຫິດທີ່ຕ່ຳກວ່າ, **ຄພ** 84:30, 111. ປະທານຂອງກຸ່ມຄູສອນ ຄືຄວບຄຸມຄູສອນຊາວສີ່ຄົນ, **ຄພ** 107:86.

**ຄູໂມຣາ, ພູ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ພຣະຄຳພີມໍມອນ; ໂມໂຣໄນ, ລູກຊາຍຂອງມໍມອນ *ນຳອີກ*

ພູນ້ອຍໜ່ວຍໜຶ່ງທີ່ຕັ້ງຢູ່ໃນພາກຕາເວັນຕົກຂອງລັດນິວຢອກ, ສະຫະລັດອາເມຣິກາ. ຢູ່ທີ່ນີ້ສາດສະດາໃນສະໄໝບູຮານຊື່ ໂມໂຣໄນ ໄດ້ເຊື່ອງແຜ່ນຈາລຶກຄຳທີ່ບັນຈຸບັນທຶກບາງຕອນຂອງປະຊາຊາດນີໄຟ ແລະ ຊາວຢາເຣັດໄວ້. ໂຈເຊັບ ສະມິດ ໄດ້ຖືກໂມໂຣໄນຜູ້ທີ່ໄດ້ຟື້ນຄືນຊີວິດແລ້ວພາໄປຫາພູໜ່ວຍນີ້ໃນປີ 1827 ເພື່ອໄປເອົາແຜ່ນຈາລຶກ ແລະ ແປພາກສ່ວນໜຶ່ງໃນນັ້ນ. ການແປນີ້ແມ່ນພຣະຄຳພີມໍມອນ.

ຊາວນີໄຟໄດ້ໄປເຕົ້າໂຮມກັນຢູ່ທີ່ຄູໂມຣາ,

**ມມ** 6:2–4. ຄູໂມຣາຢູ່ໃນແຜ່ນດິນທີ່ມີແມ່ນ້ຳຫລາຍສາຍ, **ມມ** 6:4. ມໍມອນໄດ້ເຊື່ອງແຜ່ນຈາລຶກໄວ້ໃນພູຄູໂມຣາ, **ມມ** 6:6. ທຸກຄົນນອກຈາກຊາວນີໄຟຊາວສີ່ຄົນໄດ້ຖືກຂ້າຕາຍຢູ່ພູຄູໂມຣາ, **ມມ** 6:11.

ພວກເຮົາໄດ້ຍິນຂ່າວອັນໜ້າຊື່ນຊົມຈາກພູຄູໂມຣາ, **ຄພ** 128:20.

ໂຈເຊັບ ສະມິດ ໄດ້ເອົາແຜ່ນຈາລຶກໄປຈາກພູຄູໂມຣາ, **ຈສ—ປ** 1:42, 50–54, 59.

**ເຄັດເຊມາເນ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ໝາກກອກເທດ, ພູ *ນຳອີກ*

ສວນແຫ່ງໜຶ່ງທີ່ຖືກກ່າວເຖິງໃນພຣະຄຳພີໃໝ່ວ່າຖືກຕັ້ງຢູ່ໃກ້ພູໝາກກອກເທດ. ໃນພາສາອາຣັບ, ຄຳວ່າ *ເຄັດເຊມາເນ* ໝາຍເຖິງ "ເຄື່ອງໂມ້ໝາກກອກ." ພຣະເຢຊູໄດ້ໄປຫາສວນໃນຍາມກາງຄືນບ່ອນທີ່ຢູດາໄດ້ທໍລະຍົດຕໍ່ພຣະອົງ. ຢູ່ທີ່ນັ້ນພຣະອົງໄດ້ອະທິຖານ ແລະ ທົນທຸກທໍລະມານໃນສວນເຄັດເຊມາເນ ເພື່ອບາບຂອງມະນຸດຊາດ (ມທ 26:36, 39; ມຣກ 14:32; ຢຮ 18:1; ແອວ 21:9; ຄພ 19:15–19).

**ເຄຣູບິມ**

ຮູບ ລັກ ສະ ນະ ທີ່ ສະແດງ ເຖິງ ສັດ ໃນ ສະຫວັນ, ລັກສະນະທີ່ແນ່ນອນບໍ່ເປັນທີ່ຮູ້ຈັກ. ເຄຣູບິມໄດ້ຖືກເອີ້ນໃຫ້ຮັກສາສະຖານທີ່ສັກສິດ.

ພຣະ ຜູ້ ເປັນ ເຈົ້າ ໄດ້ ເອົາ ເຄຣູບິມມາ ເຝົ້າສວນຂອງຕົ້ນໄມ້ແຫ່ງຊີວິດ, **ປຖກ** 3:24 (ແອວ 12:21–29; 42:2–3; ມຊ 4:31). ເຄື່ອງໝາຍເປັນຕົວແທນໃຫ້ແກ່ເຄຣູບິມຖືກວາງໄວ້ເທິງຝາອັດຫີບ, **ອພຍ** 25:18, 22 (1 ກສ 6:23–28; ຮຣ 9:5). ເຄຣູບິມຖືກກ່າວເຖິງໃນພາບນິມິດຂອງເອເຊກຽນ, **ອຊກ** 10; 11:22.

**ຄົນຕ່າງຊາດ**

ດັ່ງທີ່ ໃຊ້ໃນ ພຣະ ຄຳ ພີ, ຄົນຕ່າງຊາດ ມີຫລາຍຄວາມໝາຍ. ບາງເທື່ອມັນອ້າງເຖິງຜູ້ຄົນທີ່ບໍ່ໄດ້ເປັນເຊື້ອສາຍຂອງຊາວອິດສະຣາເອນ, ບາງເທື່ອແມ່ນຜູ້ຄົນທີ່ບໍ່ໄດ້ເປັນເຊື້ອສາຍຂອງຊາວຢິວ, ແລະ ບາງເທື່ອແມ່ນປະຊາຊາດທີ່ບໍ່ຮູ້ຈັກພຣະກິດຕິຄຸນ, ເຖິງແມ່ນວ່າບາງຄົນຈະມີສາຍເລືອດຂອງຊາວອິດສະລາເອນກໍຕາມໃນບັນດາຜູ້ຄົນ. ການໃຊ້ຄຳນີ້ໃນຕອນຫລັງເປັນຈຸດພິເສດຂອງຄຳໂດຍສະເພາະ ດັ່ງທີ່ໃຊ້ໃນພຣະຄຳພີມໍມອນ ແລະ ຄຳສອນ ແລະ ພັນທະສັນຍາ.

ຊາວ ອິດສະ ຣາເອນຈະບໍ່ແຕ່ງງານກັບຄົນທີ່ບໍ່ໄດ້ເປັນເຊື້ອສາຍອິດສະຣາເອນ (ຄົນຕ່າງຊາດ), **ພບຍ** 7:1–3. ພຣະຜູ້ເປັນເຈົ້າຈະໃຫ້ແສງແຈ້ງແກ່ຊາວໂລກ, **ອຊຢ** 42:6.

ເປໂຕໄດ້ຖືກບັນຊາໃຫ້ນຳພຣະກິດຕິຄຸນໄປຫາຄົນຕ່າງຊາດ, **ກຈກ** 10:9–48. ພຣະເຈົ້າກໍໄດ້ໃຫ້ຄົນຕ່າງຊາດມີໂອກາດກັບໃຈໃໝ່, **ກຈກ** 11:18. ພວກເຮົາຮັບບັບຕິສະມາເຂົ້າເປັນສາດສະໜາຈັກດຽວກັນ, ບໍ່ວ່າເຮົາຈະເປັນຄົນຢິວ ຫລື ຄົນຕ່າງຊາດກໍຕາມ, **1 ກຣທ** 12:13. ຄົນຕ່າງຊາດຄວນເປັນຜູ້ຮັບມໍລະດົກຮ່ວມກັນໃນພຣະຄຣິດໂດຍທາງພຣະກິດຕິຄຸນ, **ອຟຊ** 3:6.

ພຣະຄຳພີມໍມອນໄດ້ຖືກຂຽນເຖິງຄົນຕ່າງຊາດ, **ໜ້າ ວິ ເຄາະ ສະບັບ ຂອງພຣະຄຳພີມໍມອນ** (ມມ 3:17). ຊາຍຜູ້ໜຶ່ງໃນບັນດາຄົນຕ່າງຊາດໄດ້ອອກໄປໃນນ້ຳ, **1 ນຟ** 13:12. ໜັງສືເຫລັ້ມອື່ນໄດ້ມາຈາກຄົນຕ່າງຊາດ, **1 ນຟ** 13:39. ຄວາມສົມບູນຂອງພຣະກິດຕິຄຸນຈະມາສູ່ຄົນຕ່າງຊາດ, **1 ນຟ** 15:13 (3 ນຟ 16:7; ຄພ 20:9). ແຜ່ນດິນນີ້ຈະເປັນແຜ່ນດິນແຫ່ງເສລີພາບສຳລັບຄົນຕ່າງຊາດ, **2 ນຟ** 10:11. ຄົນຕ່າງຊາດປຽບເໝືອນຕົ້ນໝາກກອກປ່າ, **ຢຄ** 5.

ພຣະກິດຕິຄຸນຕ້ອງອອກມາໃນເວລາທີ່ຄົນຕ່າງຊາດມາເຖິງ, **ຄພ** 45:28 (ຄພ 19:27). ພຣະຄຳຈະອອກໄປເຖິງທີ່ສຸດຂອງແຜ່ນດິນໂລກ, ໄປຫາຄົນຕ່າງຊາດກ່ອນ, ແລະ ຈາກນັ້ນ ມັນຈະໄປຫາຊາວຢິວ, **ຄພ** 90:8–10. ສາວົກເຈັດສິບຕ້ອງເປັນພະຍານພິເສດຕໍ່ຄົນຕ່າງຊາດ, **ຄພ** 107:25. ຈົ່ງສົ່ງພວກແອວເດີຂອງສາດສະໜາຈັກຂອງເຮົາໄປຍັງປະຊາຊາດທັງຫລາຍ, ທຳອິດຫາຄົນຕ່າງຊາດ, ແລະ ຈາກນັ້ນຫາຊາວຢິວ, **ຄພ** 133:8.

**ຄົນຕາຍ, ຄວາມລອດສຳລັບ.** *ເບິ່ງ* ຄວາມລອດສຳລັບຄົນຕາຍ

**ຄົນທີ່ສ້າງຄວາມສະຫງົບສຸກ.** *ເບິ່ງ* ສະຫງົບ, ຄວາມສະຫງົບ *ນຳອີກ*

ບຸກຄົນທີ່ນຳຄວາມສະຫງົບມາໃຫ້ ຫລື ສົ່ງເສີມຄວາມສະຫງົບ (ມທ 5:9; 3 ນຟ 12:9). ຄົນທີ່ສ້າງຄວາມສະຫງົບສຸກ ອາດເປັນບຸກຄົນທີ່ປະກາດພຣະກິດຕິຄຸນນຳອີກ (ມຊຢ 15:11–18).

**ຄົນບໍລິສຸດ.** *ເບິ່ງ* ມາຣີ, ມານດາຂອງພຣະເຢຊູ *ນຳອີກ*

ຊາຍ ຫລື ຍິງ ທີ່ບັນລຸພາວະການແຕ່ງງານຜູ້ບໍ່ເຄີຍຮ່ວມສຳພັນເພດ. ໃນພຣະຄຳພີ, ຄົນບໍລິສຸດອາດເປັນຕົວແທນໃຫ້ບາງຄົນທີ່ມີຄວາມບໍລິສຸດທາງສິນທຳ (ພນມ 14:4).

ຍິງສາວຜູ້ໜຶ່ງຈະຖືພາ ແລະ ອອກລູກເປັນຜູ້ຊາຍ, **ອຊຢ** 7:14 (ມທ 1:23; 2 ນຟ 17:14).
ອານາຈັກສະຫວັນເປັນເໝືອນຍິງສາວບໍລິສຸດສິບຄົນ, **ມທ** 25:1–13.
ໃນເມືອງນາຊາເຣັດນັ້ນ ຂ້າພະເຈົ້າເຫັນຍິງຜູ້ບໍລິສຸດຄົນໜຶ່ງ, ຜູ້ເປັນມານດາຂອງພຣະບຸດຂອງພຣະເຈົ້າ, **1 ນຟ** 11:13–18. ນາງມາຣີໄດ້ເປັນຍິງບໍລິສຸດ, ເປັນພາຊະນະທີ່ປະເສີດ ແລະ ຖືກເລືອກໄວ້, **ແອວ** 7:10.

**ຄົນອະທຳ.** *ເບິ່ງ* ສົກກະປົກ, ຄວາມສົກກະປົກ; ຊົ່ວຮ້າຍ, ຄວາມຊົ່ວຮ້າຍ; ບາບ; ບໍ່ຊອບທຳ, ຄວາມບໍ່ຊອບທຳ *ນຳອີກ*

ບາງຄົນ ຫລື ບາງສິ່ງ ທີ່ບໍ່ສອດຄ່ອງກັບພຣະປະສົງ ຫລື ພຣະບັນຍັດຂອງພຣະເຈົ້າ; ຊົ່ວຮ້າຍ ແລະ ບໍ່ສັກສິດ.

ທາງຂອງຄົນອະທຳຈະຈິບຫາຍໄປ, **ພສສ** 1:6.
ຖ້າຄົນຊອບທຳຈະລອດພົ້ນໄດ້ຍາກ, ແລ້ວຄົນອະທຳຈະໄປຢູ່ໃສ, **1 ປຕ** 4:18.
ປະຕິເສດຕົນຈາກຄວາມບໍ່ເປັນເໝືອນດັ່ງພຣະເຈົ້າທຸກຢ່າງ, **ມຣນ** 10:32.
ການແກ້ແຄ້ນມາຢ່າງໄວເທິງຄົນອະທຳ, **ຄພ** 97:22. ໃນບັນດາຄົນອະທຳ, ພຣະຜູ້ຊ່ວຍໃຫ້ລອດບໍ່ເອີ່ຍຄຳ, **ຄພ** 138:20.

**ໂຄລະໂຄທາ.** *ເບິ່ງ* ຄຶງ, ການຄຶງ; ພຣະເຢຊູຄຣິດ *ນຳອີກ*

*ໂຄລະໂຄທາ*ໝາຍຄວາມວ່າ "ຫົວກະໂຫລກ" ໃນພາສາອາຣັບ. ມັນແມ່ນຊື່ຂອງສະຖານທີ່ ບ່ອນທີ່ພຣະຄຣິດຖືກຄຶງ (ມທ 27:33; ມຣກ 15:22; ຢຮ 19:17). ຊື່ນີ້ໃນພາສາລາຕິນແມ່ນ ຄາວາຣີ (ລກ 23:33).

**ໂຄລອບ**

ດາວດວງທີ່ຢູ່ໃກ້ສຸດກັບພຣະບັນລັງຂອງພຣະເຈົ້າ (ອຣຮ 3:2–3, 9).

ອັບຣາຮາມໄດ້ເຫັນໂຄລອບ ແລະ ໝູ່ດາວ, **ອຣຮ** 3:2–18. ເວລາຂອງພຣະຜູ້ເປັນເຈົ້າແມ່ນຖືກຄິດໄລ່ຕາມເວລາຂອງໂຄລອບ, **ອຣຮ** 3:4, 9 (ອຣຮ 5:13).

**ໂຄຣິອານທະເມີ.** *ເບິ່ງ* ຊາວຢາເຣັດ *ນຳອີກ*

ໃນພຣະຄຳພີມໍມອນ, ກະສັດຂອງຊາວຢາເຣັດ ແລະ ເປັນຄົນສຸດທ້າຍຂອງປະຊາຊາດຊາວຢາເຣັດ.

ໄດ້ຖືກພົບເຫັນໂດຍຜູ້ຄົນຂອງເຊຣາເຮັມລາ, **ອມນ** 1:21. ໄດ້ເປັນກະສັດປົກຄອງທົ່ວແຜ່ນດິນ, **ອທ** 12:1–2. ໄດ້ຖືກເຊເຣັດຈັບຕົວໄປ ແລະ ໄດ້ຮັບການປົດປ່ອຍໂດຍພວກລູກຊາຍຂອງລາວ, **ອທ** 13:23–24. ໄດ້ສູ້ຮົບກັບສັດຕູຕ່າງໆ, **ອທ** 13:28–14:31. ໄດ້ກັບໃຈ, **ອທ** 15:3. ໄດ້ສູ້ຮົບຄັ້ງສຸດທ້າຍກັບຊິດ, **ອທ** 15:15–32.

**ໂຄຣິອານທັນ.** *ເບິ່ງ* ແອວມາ, ລູກຊາຍຂອງແອວມາ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຂອງແອວມາ, ຜູ້ຊຶ່ງເປັນລູກຊາຍຂອງແອວມາ.

ໄດ້ໄປຫາຊາວໂຊຣຳ, **ແອວ** 31:7. ໄດ້ປະຖິ້ມການປະຕິບັດສາດສະໜາກິດ ເພື່ອຕິດຕາມຍິງໂສເພນີຄົນໜຶ່ງໄປ, **ແອວ** 39:3. ແອວມາໄດ້ແນະນຳລາວເຖິງສະພາບຫລັງຈາກຄວາມຕາຍ, ການຟື້ນຄືນຊີວິດ, ແລະ ການຊົດໃຊ້,

**ແອວ** 39–42. ໄດ້ຖືກເອີ້ນໃຫ້ສັ່ງສອນຄືນອີກ, **ແອວ** 42:31. ໄດ້ອອກໄປຫາ ແຜ່ນດິນທາງເໜືອໃນເຮືອລຳໜຶ່ງ, **ແອວ** 63:10.

**ໂຄຣິຫໍ.** *ເບິ່ງ* ຜູ້ຕໍ່ຕ້ານພຣະຄຣິດ *ນຳອີກ*

ຜູ້ຕໍ່ຕ້ານ ພຣະຄຣິດໃນພຣະຄຳ ພີມໍມອນ ຜູ້ໄດ້ອອກຄຳສັ່ງຢາກເຫັນ ເຄື່ອງໝາຍແຫ່ງອຳນາດຂອງພຣະເຈົ້າ; ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ໂຄຣິຫໍກາຍເປັນຄົນໄບ້ (ແອວ 30:6–60).

**ຄອບຄົວ.** *ເບິ່ງ* ເດັກ, ເດັກນ້ອຍ; ແຕ່ງງານ, ການແຕ່ງງານ; ພໍ່, ມະຕະ; ມານດາ, ແມ່ *ນຳອີກ*

ດັ່ງ ທີ່ ໃຊ້ ໃນ ພຣະ ຄຳ ພີ, ຄອບ ຄົວ ແມ່ນ ປະກອບດ້ວຍສາມີ ແລະ ພັນລະຍາ, ລູກໆ, ແລະ ບາງເທື່ອຍາດພີ່ນ້ອງຄົນອື່ນໆທີ່ອາໄສຢູ່ໃນບ້ານດຽວກັນ ຫລື ຢູ່ພາຍໃຕ້ຫົວໜ້າຄອບຄົວດຽວກັນ. ຄອບຄົວກໍສາມາດມີພຽງແຕ່ພໍ່ ຫລື ແມ່ຄົນດຽວ ພ້ອມດ້ວຍລູກໆ, ສາມີ ແລະ ພັນລະຍາທີ່ບໍ່ມີລູກ, ຫລື ແມ່ນແຕ່ຄົນໂສດທີ່ອາໄສຢູ່ຄົນດຽວກໍໄດ້.

*ທົ່ວໄປ:* ໂດຍຜ່ານທາງເຈົ້າ ເຮົາຈະອວຍພອນຊົນຊາດທັງປວງ, **ປຖກ** 12:3 (ປຖກ 28:14; ອຣຮ 2:11). ເຮົາຈະເປັນພຣະເຈົ້າແຫ່ງເຜົ່າຕ່າງໆຂອງຊາດອິດສະຣາເອນ, **ຢມຢ** 31:1.

ພຣະບິດາໄດ້ບັນດານໃຫ້ທຸກໆຄອບຄົວໃນສະຫວັນ ແລະ ທີ່ເທິງແຜ່ນດິນໂລກດຳລົງຢູ່, **ອຟຊ** 3:14–15.

ອາດາມ ແລະ ເອວາໄດ້ມີຄອບຄົວຂອງແຜ່ນດິນໂລກທັງໝົດ, **2 ນຟ** 2:20.

ລັດສະໝີພາບຂອງພວກເຂົາຈະເປັນຄວາມຕໍ່ເນື່ອງຂອງເຊື້ອສາຍຕະຫລອດການ, **ຄພ** 132:19. ເຮົາຈະມອບມົງກຸດແຫ່ງຊີວິດນິລັນດອນໃນໂລກນິລັນດອນໃຫ້ແກ່ລາວ, **ຄພ** 132:55. ການຜະນຶກລູກໆເຂົ້າກັບພໍ່ແມ່ເປັນພາກສ່ວນໜຶ່ງຂອງວຽກງານອັນຍິ່ງໃຫຍ່ຂອງຄວາມສົມບູນແຫ່ງເວລາ, **ຄພ** 138:48.

ເຮົາໄດ້ສ້າງຊາຍ ແລະ ຍິງ, ແລະ ໄດ້ກ່າວກັບພວກເຂົາວ່າ: ຈົ່ງມີລູກເຕົ້າໃຫ້ມາກຫລາຍ, **ມຊ** 2:27–28. ເປັນການບໍ່ສົມຄວນທີ່ຜູ້ຊາຍຕ້ອງຢູ່ໂດດດ່ຽວ, **ມຊ** 3:18. ອາດາມ ແລະ ເອວາໄດ້ທຳງານນຳກັນ, **ມຊ** 5:1.

*ໜ້າທີ່ຮັບຜິດຊອບຂອງພໍ່ແມ່:* ອັບຣາຮາມຈະບອກສອນລູກຫລານຂອງເພິ່ນ, ແລະ ພວກເຂົາຈະຮັກສາທາງຂອງພຣະຜູ້ເປັນເຈົ້າ, **ປຖກ** 18:17–19. ຈົ່ງສິດສອນລູກເຕົ້າຂອງພວກເຈົ້າໃຫ້ຮຽນຮູ້ເອົາ, **ພບຍ** 6:7 (ພບຍ 11:19). ຮັກລູກໃຫ້ຕີສອນເຂົາ, **ສພສ** 13:24 (ສພສ 23:13). ຈົ່ງສັ່ງສອນລູກໃຫ້ຮູ້ທາງດຳເນີນຊີວິດ, **ສພສ** 22:6. ຈົ່ງໃຫ້ຊີວິດຂອງທ່ານສະໜຸກຢູ່ກັບຍິງທີ່ທ່ານຮັກ, **ປຍຈ** 9:9. ລູກຫລານຂອງເຈົ້າທັງໝົດ ຈະຖືກສິດສອນເລື່ອງພຣະຜູ້ເປັນເຈົ້າ, **ອຊຢ** 54:13 (3 ນຟ 22:13).

ຈົ່ງອົບລົມສັ່ງສອນເຂົາໃນການລ້ຽງດູຂອງພຣະຜູ້ເປັນເຈົ້າ, **ອຟຊ** 6:1–4 (ອນ 1:1). ຖ້າຜູ້ໃດບໍ່ອຸດໜູນຄົນໃນຄອບຄົວຂອງຕົນເອງແລ້ວ, ຜູ້ນັ້ນກໍໄດ້ປະຕິເສດຄວາມເຊື່ອແລ້ວ, **1 ຕມທ** 5:8.

ເພິ່ນໄດ້ແນະນຳພວກເຂົາດ້ວຍຄວາມຮູ້ສຶກທັງໝົດຂອງບິດາມານດາທີ່ປານີ, **1 ນຟ** 8:37. ພວກເຮົາເວົ້າເຖິງພຣະຄຣິດເພື່ອລູກຫລານຂອງພວກເຮົາຈະໄດ້ຮູ້ວ່າພວກເຂົາຈະຫລຽວຫາແຫລ່ງໃດ, **2 ນຟ** 25:26. ຜົວຂອງພວກເຂົາ ແລະ ເມຍຂອງພວກເຂົາກໍຮັກລູກໆຂອງພວກເຂົາ, **ຢຄ** 3:7. ຈົ່ງສິດສອນໃຫ້ພວກເຂົາຮັກກັນ ແລະ ຮັບໃຊ້ຊຶ່ງກັນແລະກັນ, **ມຊຢ** 4:14–15. ເຈົ້າຈົ່ງປ້ອງກັນຄອບຄົວຂອງເຈົ້າ ຈົນເຖິງການນອງເລືອດ, **ແອວ** 43:47. ຈົ່ງອະທິຖານນຳຄອບຄົວຂອງເຈົ້າ ເພື່ອເມຍຂອງເຈົ້າ ແລະ ລູກຂອງເຈົ້າຈະໄດ້ຮັບພອນ, **3 ນຟ** 18:21.

ພໍ່ແມ່ຕ້ອງສິດສອນພຣະກິດຕິຄຸນໃຫ້ແກ່ລູກໆ, **ຄພ** 68:25. ທຸກໆຄົນມີໜ້າທີ່ ທີ່ຈະຈັດຫາໃຫ້ຄອບຄົວຂອງຕົນເອງ, **ຄພ** 75:28. ເດັກນ້ອຍທຸກຄົນມີສິດທີ່ຈະໄດ້ຮັບການລ້ຽງດູຈາກພໍ່ແມ່ຂອງຕົນ, **ຄພ** 83:4. ຈົ່ງລ້ຽງດູລູກໆຂອງພວກເຈົ້າໃນຄວາມສະຫວ່າງ ແລະ ຄວາມຈິງ, **ຄພ** 93:40. ເຈົ້າຕ້ອງຈັດບ້ານເຮືອນຂອງເຈົ້າໃຫ້ເປັນລະບຽບ, **ຄພ** 93:43–44, 50. ຜູ້ດຳລົງຖານະປະໂລຫິດຄວນເປັນອິດທິພົນໃຫ້

ແກ່ຄົນອື່ນ ໂດຍຄວາມຮັກອັນບໍ່ແກ້ງເຮັດ, **ຄພ** 121:41.

ອາດາມ ແລະ ເອວາ ໄດ້ເຮັດ ໃຫ້ ເລື່ອງທັງໝົດເປັນທີ່ຮູ້ຈັກແກ່ພວກລູກໆຂອງພວກເຂົາ, **ມຊ** 5:12.

*ໜ້າທີ່ຮັບຜິດຊອບຂອງລູກ:* ຈົ່ງນັບຖືພໍ່ແມ່ຂອງເຈົ້າ, **ອພຍ** 20:12. ລູກເອີຍ, ຈົ່ງ ເອົາໃຈໃສ່ຕໍ່ສິ່ງທີ່ພໍ່ແມ່ບອກສອນ, **ສພສ** 1:8 (ສພສ 13:1; 23:22).

ພຣະເຢຊູອ່ອນນ້ອມ ຍອມຟັງພໍ່ ແມ່ຂອງພຣະອົງ, **ລກ** 2:51. ພຣະເຢຊູໄດ້ກະທຳຕາມພຣະປະສົງຂອງພຣະບິດາຂອງພຣະອົງ, **ຢຮ** 6:38 (3 ນຟ 27:13). ຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນ, **ອຟຊ** 6:1 (ກລຊ 3:20).

ຖ້າຫາກລູກກັບໃຈ, ຄວາມເຄືອງແຄ້ນຂອງພວກເຈົ້າຈະຫັນໜີໄປ, **ຄພ** 98:45–48. ທິດາທີ່ຊື່ສັດຂອງເອວາໄດ້ນະມັດສະການພຣະເຈົ້າອົງທ່ຽງແທ້ ແລະ ຊົງພຣະຊົນຢູ່, **ຄພ** 138:38–39.

*ຄອບຄົວນິລັນດອນ:* ຄຳສອນ ແລະ ພັນທະສັນ ຍາ ໄດ້ຕັ້ງຄວາມ ສຳພັນທຳມະຊາດຂອງການແຕ່ງງານ ແລະ ຄອບຄົວນິລັນດອນ. ການແຕ່ງງານຊັ້ນສູງ ແລະ ການສືບຕໍ່ຂອງຄອບຄົວເຮັດໃຫ້ສາມີ ແລະ ພັນລະຍາກາຍເປັນພຣະເຈົ້າ (ຄພ 132:15–20).

**ຄຽດແຄ້ນ, ຄວາມຄຽດແຄ້ນ.** *ເບິ່ງ* ກຽດຊັງ, ຄວາມກຽດຊັງ; ຮັກ, ຄວາມຮັກ *ນຳອີກ*

ຄວາມຄຽດ ແຄ້ນ ເປັນການສະ ແດງອອກເຖິງອາລົມຮ້າຍ. ພຣະຜູ້ເປັນເຈົ້າໄດ້ເຕືອນໄພ່ພົນຂອງພຣະອົງໃຫ້ຄວບຄຸມຄວາມຄຽດແຄ້ນຂອງເຂົາເຈົ້າ (ມທ 5:22). ບໍ່ວ່າຈະເປັນພໍ່ແມ່ ຫລື ລູກໆ ບໍ່ຄວນຂົ່ມເຫັງຄົນອື່ນໃນຄອບຄົວ. ໃນພຣະຄຳພີ, ສ່ວນຫລາຍແລ້ວຄວາມຄຽດແຄ້ນຈະປຽບໃສ່ກັບໄຟ (2 ນຟ 15:25; ຄພ 1:13).

ກາອິນຈຶ່ງຄຽດແຄ້ນ ແລະ ໜ້າບູດບຶ້ງ, **ປຖກ** 4:5. ພຣະ ຜູ້ ເປັນ ເຈົ້າ ໂກດຮ້າຍຊ້າ ແລະ ມີຄວາມ ເມດຕາອັນໝັ້ນຄົງຍິ່ງ, **ພສສ** 145:8. ຄຳ ຕອບ ອັນ ອ່ອນ ຫວານລະງັບ ຄວາມ ໂກດໄວ້, **ສພສ** 15:1. ຄົນໃຈຮ້ອນເຮັດໃຫ້ເກີດມີການຜິດຖຽງກັນ; ແຕ່ຄວາມອົດທົນພາກພຽນນຳເອົາສັນຕິສຸກມາໃຫ້, **ສພສ** 15:18 (ສພສ 14:29). ເພື່ອປະຊາຊົນຈະ ໄດ້ສັນລະເສີນນາມຂອງເຮົາ, ເຮົາຈະຢັບຢັ້ງຄວາມໂກດຮ້າຍຂອງເຮົາໄວ້, **ອຊຢ** 48:9. ເຮົາຈະຍິນດີຕ້ອນຮັບຜູ້ຄົນທີ່ສືບຕໍ່ຍົວະເຮົາໃຫ້ໂກດຮ້າຍ, **ອຊຢ** 65:2–3.

ຖ້າ ຜູ້ ໃດຕົບ ແກ້ມເບື້ອງຂວາຂອງເຈົ້າ ຈົ່ງປິ່ນ ໃຫ້ ເຂົາ ຕົບ ແກ້ມເບື້ອງຊ້າຍດ້ວຍ, **ມທ** 5:39. ຝ່າຍພໍ່ແມ່ຢ່າເຮັດໃຫ້ລູກຂອງຕົນຂັດເຄືອງໃຈ, **ອຟຊ** 6:4.

ເພາະວ່າຂ້າພະເຈົ້າບອກຄວາມຈິງແກ່ພວກທ່ານ, ພວກທ່ານຈຶ່ງຄຽດແຄ້ນໃຫ້ຂ້າພະເຈົ້າ, **ມຊຢ** 13:4. ເຮົາຈະມາຢ້ຽມຢາມຜູ້ຄົນພວກນີ້ດ້ວຍຄວາມຄຽດແຄ້ນຂອງເຮົາ, **ແອວ** 8:29.

ບໍ່ມີສິ່ງໃດທີ່ມະນຸດຈະເຮັດໃຫ້ພຣະເຈົ້າຂຸ່ນເຄືອງ, ຫລື ພຣະພິໂລດ, ຍົກເວັ້ນແຕ່ຜູ້ທີ່ບໍ່ສາລະພາບວ່າພຣະຫັດຂອງພຣະອົງຢູ່ໃນທຸກສິ່ງທັງປວງ, **ຄພ** 59:21. ເຮົາ, ພຣະຜູ້ເປັນເຈົ້າ, ພຣະພິໂລດກັບຄົນຊົ່ວ, **ຄພ** 63:32.

**ເຄື່ອງຖວາຍ.** *ເບິ່ງ* ຄວາມຜາສຸກ; ເສຍສະລະ, ການເສຍສະລະ; ສ່ວນສິບ, ເງິນສ່ວນສິບ; ຖືສິນອົດເຂົ້າ, ການຖືສິນອົດເຂົ້າ; ໃຫ້ທານ, ການໃຫ້ທານ *ນຳອີກ*

ຂອງຂວັນທີ່ມອບໃຫ້ແກ່ພຣະຜູ້ເປັນເຈົ້າ. ພຣະຄຳພີເດີມມັກໃຊ້ຄຳທີ່ອ້າງເຖິງການເສຍສະລະ ຫລື ເຜົາຖວາຍ. ສາດສະໜາຈັກໃນທຸກວັນນີ້ ໃຊ້ການບໍລິຈາກຖືສິນອົດເຂົ້າ ແລະ ການບໍລິຈາກອື່ນໆດ້ວຍຄວາມສະໝັກໃຈ (ລວມທັງເວລາ, ພອນສະຫວັນ, ແລະ ຊັບສິນ) ເພື່ອຊ່ວຍເຫລືອຄົນຍາກຈົນ ແລະ ເພື່ອອຸດົມການທີ່ດີອື່ນໆ.

ພວກເຈົ້າໄດ້ສໍ້ໂກງໃນເລື່ອງໜຶ່ງສ່ວນສິບ ແລະ ເຄື່ອງຖວາຍຕ່າງໆນັ້ນແຫລະ, **ມລກ** 3:8–10.

ຈົ່ງກັບໄປຄືນດີກັບອ້າຍເອື້ອຍນ້ອງຂອງຕົນສາກ່ອນ ຈຶ່ງກັບຄືນມາຖວາຍເຄື່ອງບູຊາຂອງເຈົ້າ, **ມທ** 5:23–24.

ຖວາຍທັງຈິດວິນຍານຂອງພວກທ່ານເປັນເຄື່ອງບູຊາແດ່ພຣະຄຣິດ, **ອມນ** 1:26. ຖ້າຫາກຜູ້ຄົນຖວາຍສິ່ງຂອງໂດຍບໍ່ແມ່ນດ້ວຍເຈດຕະນາອັນແທ້ແຈ້ງ, ມັນກໍບໍ່ເປັນປະໂຫຍດກັບເຂົາເລີຍ, **ມຣນ** 7:6.

ຖານະປະໂລຫິດແຫ່ງອາໂຣນຈະບໍ່ຖືກເອົາໄປຈາກແຜ່ນດິນໂລກນີ້ອີກຈັກເທື່ອ ຈົນກວ່າພວກບຸດຂອງເລວີຈະຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຄືນອີກໃນຄວາມຊອບທຳ, **ຄພ** 13. ໃນມື້ນີ້, ວັນຂອງພຣະຜູ້ເປັນເຈົ້າ, ຈົ່ງຖວາຍເຄື່ອງບູຊາຂອງເຈົ້າ ແລະ ສິນລະລຶກຂອງເຈົ້າແດ່ພຣະຜູ້ສູງສຸດ, **ຄພ** 59:12. ໃຫ້ພວກເຮົາໃນຖານະເປັນສາດສະໜາຈັກໜຶ່ງ ແລະ ຜູ້ຄົນກຸ່ມໜຶ່ງນຳເຄື່ອງຖວາຍບູຊາມາຖວາຍແດ່ພຣະຜູ້ເປັນເຈົ້າໃນຄວາມຊອບທຳ, **ຄພ** 128:24.

**ເຄື່ອງປ້ອງກັນ**

ເຄື່ອງປ້ອງກັນຮ່າງກາຍໃສ່ຈາກການຟັນ ຫລື ຊຸກດັນຈາກອາວຸດ. ຄຳນີ້ເຄີຍມີຄວາມໝາຍວ່າຄຸນສົມບັດທາງວິນຍານທີ່ປົກປ້ອງບຸກຄົນຈາກການລໍ້ລວງ ຫລື ຄວາມຊົ່ວຮ້າຍ.

ຈົ່ງສວມຍຸດທະພັນຄົບຊຸດຂອງພຣະເຈົ້າ, **ອຟຊ** 6:10–18 (ຄພ 27:15–18).

**ເຄື່ອງໝາຍ.** *ເບິ່ງ* ເຄື່ອງໝາຍແຫ່ງການເວລາ; ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ; ມະຫັດສະຈັນ, ການມະຫັດສະຈັນ *ນຳອີກ*

ເຫດການ ຫລື ປະສົບການ ຊຶ່ງຜູ້ຄົນເຂົ້າໃຈວ່າເປັນຫລັກຖານ ຫລື ເຄື່ອງພິສູດກ່ຽວກັບບາງສິ່ງ. ຕາມປົກກະຕິແລ້ວ ເຄື່ອງໝາຍອັນໜ້າອັດສະຈັນໃຈ ສະແດງໃຫ້ປະຈັກຈາກພຣະເຈົ້າ. ຊາຕານກໍມີອຳນາດທີ່ຈະສະແດງເຄື່ອງໝາຍໃນບາງສະພາບການ. ໄພ່ພົນຂອງພຣະເຈົ້າຄວນສະແຫວງຫາຂອງປະທານແຫ່ງພຣະວິນຍານ ແຕ່ບໍ່ຄວນສະແຫວງຫາເຄື່ອງໝາຍ ເພື່ອສະໜອງຄວາມຢາກຮູ້ຢາກເຫັນ ຫລື ຢືນຢັນສັດທາ. ແຕ່ພຣະຜູ້ເປັນເຈົ້າຈະປະທານເຄື່ອງໝາຍໃຫ້ ເມື່ອພຣະອົງເຫັນວ່າສົມຄວນຕໍ່ຜູ້ທີ່ເຊື່ອ (ຄພ 58:64).

ພຣະຜູ້ເປັນເຈົ້າ ຈະໃຫ້ເຈົ້າເຫັນໝາຍສຳຄັນຢ່າງໜຶ່ງ, **ອຊຢ** 7:14 (2 ນຟ 17:14). ພຣະເຈົ້າຈະກະທຳສິ່ງໜ້າງຶດງໍ້ ແລະ ການອັດສະຈັນ ໃນຟ້າສະຫວັນ ແລະ ໃນແຜ່ນດິນໂລກ, **ດນອ** 6:27.

ຄົນໃນສະໄໝຊົ່ວ ແລະ ຄິດທໍລະຍົດ ສະແຫວງຫາໝາຍສຳຄັນ, **ມທ** 12:39 (ມທ 16:4; ລກ 11:29). ໝາຍສຳຄັນເຫລົ່ານີ້ຈະຕິດຕາມຄົນທີ່ເຊື່ອ, **ມຣກ** 16:17 (ມມ 9:24; ອທ 4:18; ຄພ 84:65).

ເຊເຣັມຮຽກຮ້ອງຢາກເຫັນເຄື່ອງໝາຍ, **ຢຄ** 7:13–20. ໂຄຣິຫໍສັ່ງຢາກເຫັນເຄື່ອງໝາຍ, **ແອວ** 30:48–60. ຈະສະແດງເຄື່ອງໝາຍ ເມື່ອນັ້ນພວກເຮົາຈະເຊື່ອ, **ແອວ** 32:17. ຄົນສ່ວນຫລາຍກໍຍັງເຊື່ອເຄື່ອງໝາຍ ແລະ ການແປກປະຫລາດ, **3 ນຟ** 1:22. ຜູ້ຄົນຫລົງລືມເຄື່ອງໝາຍ ແລະ ຄວາມແປກປະຫລາດ, **3 ນຟ** 2:1. ທ່ານບໍ່ໄດ້ຮັບພະຍານຈົນກວ່າຫລັງຈາກການທົດລອງສັດທາຂອງທ່ານ, **ອທ** 12:6.

ຢ່າຮຽກຮ້ອງສິ່ງມະຫັດສະຈັນ, ຍົກເວັ້ນແຕ່ເຮົາຈະບັນຊາ, **ຄພ** 24:13. ສັດທາບໍ່ໄດ້ມາເຖິງໂດຍເຄື່ອງໝາຍ, ແຕ່ເຄື່ອງໝາຍຕິດຕາມຄົນທີ່ເຊື່ອ, **ຄພ** 63:7–11.

ໃນວັນເຫລົ່ານັ້ນພຣະຄຣິດປອມຈະເກີດຂຶ້ນ, ແລະ ສາດສະດາປອມ, ແລະ ຈະສະແດງເຄື່ອງໝາຍ ແລະ ການແປກປະຫລາດ, **ຈສ—ມ** 1:22.

**ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ.** *ເບິ່ງ* ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ

**ເຄື່ອງໝາຍເຖິງການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ເຫດການທີ່ເກີດພ້ອມກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ

*ການກຳເນີດ:* ຍິງສາວຜູ້ໜຶ່ງຈະຖືພາ ແລະ ຈະອອກລູກເປັນຜູ້ຊາຍ, **ອຊຢ** 7:14. ຜູ້ປົກຄອງຄົນໜຶ່ງສຳລັບຊາດອິດສະຣາເອນ ຈະອອກມາຈາກເບັດເລເຮັມ, **ມກ** 5:2.

ຊາມູເອນຄົນເລມັນໄດ້ທຳນາຍເຖິງຄວາມແຈ້ງຂອງມື້ໜຶ່ງ, ຄືນໜຶ່ງ, ແລະ ອີກມື້ໜຶ່ງ; ດາວດວງໃໝ່; ແລະ ເຄື່ອງໝາຍອື່ນໆອີກ, **ຮລມ** 14:2–6. ເຄື່ອງໝາຍໄດ້ເກີດເປັນຈິງ, **3 ນຟ** 1:15–21.

*ການສິ້ນພຣະຊົນ:* ຊາມູເອນຄົນເລມັນໄດ້ທຳນາຍເຖິງຄວາມມືດ, ຟ້າຮ້ອງ ແລະ ຟ້າແມບເຫລື້ອມ, ແລະ ແຜ່ນດິນໄຫວ, **ຮລມ** 14:20–27. ເຄື່ອງໝາຍໄດ້ເກີດເປັນຈິງ, **3 ນຟ** 8:5–23.

**ເຄື່ອງໝາຍແຫ່ງການເວລາ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ເຄື່ອງໝາຍ; ຍຸກສຸດທ້າຍ *ນຳອີກ*

ເຫດການ ແລະ ປະສົບການທີ່ພຣະເຈົ້າໄດ້ປະທານໃຫ້ຜູ້ຄົນ ເພື່ອສະແດງໃຫ້ເຫັນວ່າບາງສິ່ງທີ່ສຳຄັນ ໃນວຽກງານຂອງພຣະອົງ ໄດ້ເກີດຂຶ້ນ ຫລື ຈະເກີດຂຶ້ນໃນບໍ່ດົນ. ໃນຍຸກສຸດທ້າຍ, ເຄື່ອງໝາຍຫລາຍຢ່າງ ສຳລັບການສະເດັດມາຄັ້ງທີສອງຂອງພຣະຜູ້ຊ່ວຍໃຫ້ລອດໄດ້ຖືກທຳນາຍໄວ້. ສິ່ງສັນຍານເຫລົ່ານີ້ ຈະເຮັດໃຫ້ຜູ້ຄົນທີ່ຊື່ສັດຮັບຮູ້ແຜນຂອງພຣະເຈົ້າ, ຖືກເຕືອນ, ແລະ ຕຽມຕົວ.

ພູບ່ອນທີ່ຕັ້ງພຣະວິຫານຈະສູງກວ່າທຸກໆແຫ່ງ ພູນັ້ນຈະຕັ້ງຢູ່ສູງສົ່ງເທິງເນີນພູທັງໝົດ, **ອຊຢ** 2:2–3. ພຣະອົງຈະຍົກທຸງສັນຍານຂຶ້ນ ແລະ ເຕົ້າໂຮມຊາວອິດສະຣາເອນ, **ອຊຢ** 5:26 (2 ນຟ 15:26–30). ດວງຕາເວັນຈະມືດດັບ ແລະ ດວງເດືອນກໍຈະບໍ່ສ່ອງແຈ້ງ, **ອຊຢ** 13:10 (ຢອ 3:15; ຄພ 29:14). ຜູ້ຄົນຈະລະເມີດກົດບັນຍັດ ແລະ ຝ່າຝືນພັນທະສັນຍາອັນເປັນນິດ, **ອຊຢ** 24:5. ຊາວນີໄຟຈະກ່າວສຽງດັ່ງອຸດອິດອອກຈາກຂີ້ຝຸ່ນດິນ, **ອຊຢ** 29:4 (2 ນຟ 27). ຊາວອິດສະຣາເອນຈະຖືກເຕົ້າໂຮມດ້ວຍອຳນາດ, **ອຊຢ** 49:22–23 (1 ນຟ 21:22–23; 3 ນຟ 20–21). ພຣະເຈົ້າຈະຈັດຕັ້ງອານາຈັກໜຶ່ງຂຶ້ນ ຊຶ່ງຈະບໍ່ສູນຫາຍໄປຈັກເທື່ອ, **ດນອ** 2:44 (ຄພ 65:2). ສົງຄາມ, ຄວາມຝັນ, ແລະ ພາບນິມິດ ຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງ, **ຢອ** 2. ເຮົາຈະນຳຊົນຊາດທັງໝົດມາເຕົ້າໂຮມກັນ ເພື່ອເຮັດເສິກຕໍ່ສູ້ກັບນະຄອນເຢຣູຊາເລັມ, **ຊກຢ** 14:2 (ອຊກ 38–39). ວັນນັ້ນກຳລັງມາເຖິງ ທີ່ຈະເຜົາໄໝ້ດັ່ງເຕົາອົບ, **ມລກ** 4:1 (3 ນຟ 25:1; ຄພ 133:64; ຈສ—ປ 1:37).

ໄພອັນໃຫຍ່ຫລວງຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງ, **ມທ** 24 (ຈສ—ມ 1). ໂປໂລໄດ້ບັນຍາຍເຖິງການປະຖິ້ມຄວາມເຊື່ອ ແລະ ວັນເວລາທີ່ລຳບາກຢ່າງຮ້າຍແຮງໃນຍຸກສຸດທ້າຍ, **2 ຕມທ** 3–4. ສາດສະດາສອງທ່ານຈະຖືກຂ້າ ແລະ ຟື້ນຄືນຊີວິດໃນກຸງເຢຣູຊາເລັມ, **ພນມ** 11 (ຄພ 77:15). ພຣະກິດຕິຄຸນຈະຖືກຟື້ນຟູຄືນມາໃໝ່ໃນຍຸກສຸດທ້າຍ ໂດຍການປະຕິບັດສາດສະໜາກິດຂອງທູດ, **ພນມ** 14:6–7 (ຄພ 13; 27; 110:11–16; 128:8–24). ບາບີໂລນຈະຖືກຈັດຕັ້ງຂຶ້ນ ແລະ ຈະຖືກທຳລາຍ, **ພນມ** 17–18.

ຊາວອິດສະຣາເອນຈະຖືກເຕົ້າໂຮມດ້ວຍອຳນາດ, **1 ນຟ** 21:13–26 (ອຊຢ 49:13–26; 3 ນຟ 20–21). ນີ້ຄືເຄື່ອງໝາຍ, ເພື່ອເຈົ້າຈະໄດ້ຮູ້ໃນເວລາ, **3 ນຟ** 21:1. ພຣະຄຳພີມໍມອນຈະອອກມາໂດຍອຳນາດຂອງພຣະເຈົ້າ, **ມມ** 8.

ຊາວເລມັນຈະບານສະພັ່ງ, **ຄພ** 49:24–25. ຄົນຊົ່ວຈະຂ້າຄົນຊົ່ວ, **ຄພ** 63:32–35 (ພນມ 9). ສົງຄາມຈະລຸກລາມໄປເຖິງປະຊາຊາດທັງປວງ, **ຄພ** 87:2. ເຄື່ອງໝາຍ, ຄວາມປັ່ນປ່ວນຂອງດິນຟ້າອາກາດ, ແລະ ເຫລົ່າທູດຈັດຕຽມທາງສຳລັບການສະເດັດມາຂອງພຣະຜູ້ເປັນເຈົ້າ, **ຄພ** 88:86–94. ຄວາມມືດຈະປົກຄຸມແຜ່ນດິນໂລກ, **ຄພ** 112:23–24. ພຣະຜູ້ເປັນເຈົ້າໄດ້ບັນຊາໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມສຳລັບການສະເດັດມາຄັ້ງທີສອງ, **ຄພ** 133.

**ຄຳສາບານ.** *ເບິ່ງ* ຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ; ພັນທະສັນຍາ *ນຳອີກ*

ດັ່ງທີ່ໃຊ້ໃນພຣະຄຳພີ, ຕາມປົກກະຕິແລ້ວເປັນພັນທະສັນຍາທີ່ສັກສິດ ຫລື ຄຳສັນຍາ. ເຖິງຢ່າງໃດກໍຕາມ, ຄົນຊົ່ວ, ລວມທັງຊາຕານ

ແລະ ບໍລິວານຂອງມັນ, ກໍໄດ້ເຮັດຄຳສາບານເພື່ອບັນລຸຈຸດປະສົງທີ່ຊົ່ວຮ້າຍຂອງພວກເຂົາ. ໃນສະໄໝຂອງພຣະຄຳພີເດີມ, ຄຳສາບານເປັນສິ່ງຮັບຮູ້ກັນ; ເຖິງຢ່າງໃດກໍຕາມ, ພຣະເຢຊູຄຣິດໄດ້ສອນວ່າ ຜູ້ຄົນບໍ່ຄວນສາບານໃນພຣະນາມຂອງພຣະເຈົ້າ ຫລື ການສ້າງຂອງພຣະອົງ (ມທ 5:33–37).

ເຮົາຈະເຮັດໃຫ້ຄຳສາບານ ຊຶ່ງເຮົາໄດ້ປະຕິຍານໄວ້ກັບອັບຣາຮາມສຳເລັດ, **ປຖກ** 26:3. ເມື່ອຊາຍຄົນໜຶ່ງບະບົນໄວ້ວ່າຈະຜູກມັດຈິດວິນຍານຂອງຕົນ, ລາວຕ້ອງບໍ່ເຮັດຜິດຄຳສັນຍານັ້ນ, **ຈບຊ** 30:2. ພວກເຂົາສາບານວ່າ ພວກເຂົາຈະຍຶດຖືກົດຂອງພຣະເຈົ້າ, **ນມຢ** 10:29.

ຈົ່ງປະຕິບັດຕາມທີ່ຕົນໄດ້ສາບານໄວ້ກັບພຣະຜູ້ເປັນເຈົ້າ, **ມທ** 5:33 (ປຍຈ 5:4–5; 3 ນຟ 12:33). ພຣະເຈົ້າສາບານວ່າ ຄົນຊື່ສັດຈະລອດ, **ຮຣ** 6:13–18.

ເມື່ອໂຊຣຳໄດ້ໃຫ້ຄຳສາບານ, ຄວາມຢ້ານກົວຂອງພວກເຮົາກໍໝົດໄປ, **1 ນຟ** 4:37. ຜູ້ຄົນຂອງອຳໂມນໄດ້ສາບານວ່າເຂົາເຈົ້າຈະບໍ່ຂ້າຟັນອີກເລີຍ, **ແອວ** 53:11. ຊາວນີໄຟທີ່ຊົ່ວຮ້າຍໄດ້ເຮັດຄຳສາບານ ແລະ ເຮັດພັນທະສັນຍາລັບກັບຊາຕານ, **ຮລມ** 6:21–30.

ຜູ້ຄົນໄດ້ຮັບຊີວິດນິລັນດອນຜ່ານຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ, **ຄພ** 84:33–42. ພັນທະສັນຍາ, ການສັນຍາ, ພັນທະການ, ພັນທະ, ຄຳສາບານ ທີ່ບໍ່ໄດ້ຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ ສິ້ນສຸດລົງເມື່ອຄົນຕາຍໄປ, **ຄພ** 132:7.

**ຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ.** *ເບິ່ງ* ຄຳສາບານ; ຖານະປະໂລຫິດ; ພັນທະສັນຍາ *ບຳອີກ*

ຄຳສາບານເປັນຄຳປະຕິຍານຢືນຢັນວ່າຈະຈິງໃຈ ແລະ ຊື່ສັດຕໍ່ຄຳສັນຍາ. ພັນທະສັນຍາເປັນຄຳສັນຍາທີ່ໜັກແໜ້ນລະຫວ່າງສອງຝ່າຍ. ຖານະປະໂລຫິດແຫ່ງອາໂຣນຄືການຮັບເອົາພັນທະສັນຍາເທົ່ານັ້ນ. ຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກໄດ້ຮັບຖານະປະໂລຫິດ ໂດຍການກ່າວຄຳສາບານຢູ່ໃນໃຈເທົ່າໆກັບໂດຍພັນທະສັນຍາ. ເມື່ອຜູ້ດຳລົງຖານະປະໂລຫິດຊື່ສັດ ແລະ ເຮັດໜ້າທີ່ຂອງຕົນ ດັ່ງທີ່ພຣະເຈົ້າຊີ້ນຳ, ແລ້ວພຣະອົງຈະອວຍພອນເຂົາ. ຜູ້ທີ່ຊື່ສັດຈົນເຖິງທີ່ສຸດ ແລະ ເຮັດທຸກສິ່ງທີ່ເຂົາຖືກຂໍໃຫ້ເຮັດ ແລ້ວເຂົາຈະໄດ້ຮັບທຸກສິ່ງທີ່ພຣະບິດາມີ (ຄພ 84:33–39).

ພຣະຜູ້ເປັນເຈົ້າໄດ້ເຮັດພັນທະສັນຍາໄວ້ກັບອັບຣາຮາມ, ແລະ ອັບຣາຮາມກໍເຊື່ອຟັງ, **ປຖກ** 15:18; 17:1; 22:16–18. ພວກປະໂລຫິດໃນສະໄໝຂອງເອເຊກຽນ ບໍ່ໄດ້ດູແລຝູງແກະ, **ອຊກ** 34:2–3. ພວກປະໂລຫິດໃນສະໄໝມາລາກີເຮັດໃຫ້ພັນທະສັນຍາເສື່ອມຊາມ, **ມລກ** 1–2.

**ຄຳສອນ ແລະ ພັນທະສັນຍາ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ປຶ້ມພຣະບັນຍັດ; ພຣະຄຳພີ; ວິໄນສາດສະໜາ *ບຳອີກ*

ການຮວບຮວມການເປີດເຜີຍອັນສູງສົ່ງໃນຍຸກສຸດທ້າຍ ແລະ ການປະກາດທີ່ດົນໃຈ. ພຣະຜູ້ເປັນເຈົ້າໄດ້ປະທານສິ່ງເຫລົ່ານີ້ໃຫ້ແກ່ໂຈເຊັບ ສະມິດ ແລະ ຜູ້ສືບຕຳແໜ່ງຫລາຍຄົນສຳລັບການສ້າງຕັ້ງ ແລະ ການຄວບຄຸມອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກໃນຍຸກສຸດທ້າຍ. ຄຳສອນ ແລະ ພັນທະສັນຍາ ເປັນສ່ວນໜຶ່ງໃນໜັງສືມາດຕະຖານໃນສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ພ້ອມດ້ວຍພຣະຄຣິສຕະທຳຄຳພີ, ພຣະຄຳພີມໍມອນ, ແລະ ໄຂ່ມຸກອັນລ້ຳຄ່າ. ຄຳສອນ ແລະ ພັນທະສັນຍາ ເປັນໜັງສືພິເສດ, ເຖິງຢ່າງໃດກໍຕາມ, ເພາະວ່າມັນບໍ່ໄດ້ເປັນການແປຂອງບັນທຶກບູຮານ; ພຣະຜູ້ເປັນເຈົ້າໄດ້ປະທານການເປີດເຜີຍເຫລົ່ານີ້ໃຫ້ແກ່ສາດສະດາທີ່ພຣະອົງໄດ້ເລືອກໄວ້ໃນສະໄໝໃໝ່ນີ້ ເພື່ອຈະໄດ້ຟື້ນຟູອານາຈັກຂອງພຣະອົງຄືນມາໃໝ່. ໃນການເປີດເຜີຍ ບຸກຄົນຈະໄດ້ຍິນສຸລະສຽງທີ່ອ່ອນນ້ອມ ແຕ່ໜັກແໜ້ນຂອງພຣະຜູ້ເປັນເຈົ້າ ພຣະເຢຊູຄຣິດ (ຄພ 18:35–36).

ປະຫວັດຂອງໂຈເຊັບ ສະມິດ ກ່າວວ່າ ຄຳສອນ ແລະ ພັນທະສັນຍາ ເປັນຮາກຖານຂອງ

ສາດສະໜາຈັກໃນຍຸກສຸດທ້າຍ ແລະ ເປັນຜົນປະໂຫຍດຕໍ່ໂລກ (ຄພ 70 ຫົວເລື່ອງ). ການເປີດເຜີຍໃນນັ້ນໄດ້ເລີ່ມຕົ້ນວຽກງານການຕຽມທາງສຳລັບການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ, ໃນການບັນລຸຖ້ອຍຄຳທັງໝົດທີ່ສາດສະດາໄດ້ກ່າວໄວ້ນັບແຕ່ການເລີ່ມຕົ້ນຂອງໂລກ.

**ຄຳສອນຂອງພຣະຄຣິດ.** *ເບິ່ງ* ແຜນແຫ່ງການໄຖ່; ພຣະກິດຕິຄຸນ *ບຳອີກ*

ຫລັກທຳ ແລະ ຄຳສອນແຫ່ງພຣະກິດຕິຄຸນຂອງພຣະເຢຊູຄຣິດ.

ຄຳສັ່ງສອນຂອງຂ້ອຍຈະຕົກລົງເໝືອນຝົນທ່າໃຫຍ່, **ພບຍ** 32:2. ຄົນທີ່ມັກຈົ່ມກໍຈະຍິນດີຮັບຟັງຄຳບອກສອນ, **ອຊຢ** 29:24.

ປະຊາຊົນກໍປະຫລາດໃຈຫລາຍໃນຄຳສັ່ງສອນຂອງພຣະອົງ, **ມທ** 7:28. ສິ່ງທີ່ເຮົາສັ່ງສອນບໍ່ແມ່ນຂອງເຮົາ, ແຕ່ແມ່ນຄຳສັ່ງສອນຈາກພຣະອົງຜູ້ທີ່ໄດ້ໃຊ້ເຮົາມາ, **ຢຮ** 7:16. ພຣະຄຳພີທຸກຕອນເປັນປະໂຫຍດໃນການສອນ, **2 ຕມທ** 3:16.

ນີ້ຄືຄຳສອນຂອງພຣະຄຣິດ, ແລະ ຄືຄຳສອນອັນດຽວ ແລະ ແທ້ຈິງຂອງພຣະບິດາ, **2 ນຟ** 31:21 (2 ນຟ 32:6). ຈະບໍ່ມີການໂຕ້ຖຽງກັນໃນບັນດາພວກເຈົ້າກ່ຽວກັບຄຳສອນຂອງເຮົາ, **3 ນຟ** 11:28, 32, 35, 39–40.

ຊາຕານຈະຍຸຍົງໃຈຂອງຜູ້ຄົນໃຫ້ມີການຂັດແຍ້ງກັນກ່ຽວກັບຫລັກທຳຂອງຄຳສອນຂອງເຮົາ, **ຄພ** 10:62–63, 67. ຈົ່ງສິດສອນລູກໆໃຫ້ເຂົ້າໃຈຄຳສອນເລື່ອງການກັບໃຈ, ສັດທາໃນພຣະຄຣິດ, ການຮັບບັບຕິສະມາ, ແລະຂອງປະທານແຫ່ງພຣະວິນຍານບໍລິສຸດ, **ຄພ** 68:25. ສິດສອນຄຳສອນຂອງອານາຈັກໃຫ້ກັນແລະກັນ, **ຄພ** 88:77–78. ຄຳສອນຂອງຖານະປະໂລຫິດຈະກັ່ນລົງມາເທິງຈິດວິນຍານຂອງທ່ານ, **ຄພ** 121:45.

**ຄຳຖະແຫລງນະໂຍບາຍ.** *ເບິ່ງ* ແຕ່ງງານ, ການແຕ່ງງານ—ການມີເມຍຫລາຍຄົນ; ວູດຣັບ, ວິວເຝີດ *ບຳອີກ*

ຂໍ້ປະກາດຢ່າງເປັນທາງການໂດຍປະທານວິວເຝີດ ວູດຣັບ ໃນປີ 1890 ໄດ້ບອກຢ່າງແຈ່ມແຈ້ງວ່າ ສາດສະໜາຈັກ ແລະ ສະມາຊິກໄດ້ຍິນຍອມຕໍ່ກົດໝາຍຂອງແຜ່ນດິນ ແລະ ບໍ່ໄດ້ປະຕິບັດການມີເມຍຫລາຍຄົນອີກຕໍ່ໄປ (ຂປ—1). ປະທານວູດຣັບໄດ້ລະບຸຄຳຖະແຫລງນະໂຍບາຍ ຕິດຕາມດ້ວຍພາບນິມິດ ແລະ ການເປີດເຜີຍຈາກພຣະເຈົ້າ.

**ຄຳແນະນຳ.** *ເບິ່ງ* ສາດສະດາ *ບຳອີກ*

ການຕັກເຕືອນ, ການເຕືອນ, ການແນະນຳ, ການຊີ້ນຳຈາກພຣະຜູ້ເປັນເຈົ້າ ແລະ ຜູ້ນຳຂອງພຣະອົງທີ່ຖືກແຕ່ງຕັ້ງໄວ້.

ຂ້ອຍຂໍໃຫ້ຄຳແນະນຳແກ່ເຈົ້າ, **ອພຍ** 18:19. ພຣະເຈົ້າຈະນຳພາຂ້ານ້ອຍດ້ວຍຄຳແນະນຳຂອງພຣະອົງ, **ພສສ** 73:24. ຊາດຈະຫລົ້ມຈົມແທ້ຫາກບໍ່ມີການນຳພາ, **ສພສ** 11:14.

ພວກຟາຣີຊາຍ ແລະ ພວກທະນາຍຄວາມໄດ້ຂັດຂວາງພຣະປະສົງຂອງພຣະເຈົ້າ, **ລກ** 7:30.

ມີການສຶກສາເປັນສິ່ງດີ ຖ້າຫາກເຂົາຍອມເຊື່ອ ຟັງ ຄຳ ແນະນຳຂອງພຣະເຈົ້າ, **2 ນຟ** 9:29.

ຟັງຄຳແນະນຳຂອງພຣະອົງຜູ້ໄດ້ແຕ່ງຕັ້ງເຈົ້າ, **ຄພ** 78:2. ຮັບຄຳແນະນຳຈາກລາວ ຜູ້ທີ່ເຮົາໄດ້ແຕ່ງຕັ້ງໄວ້, **ຄພ** 108:1. ລາວໄດ້ສະແຫວງຫາທີ່ຈະສະຖາປະນາຄຳແນະນຳຂອງລາວເອງຂຶ້ນ ແທນ ຄຳແນະນຳທີ່ເຮົາໄດ້ແຕ່ງຕັ້ງໄວ້, **ຄພ** 124:84. ຈົ່ງເຊື່ອຟັງຄຳແນະນຳຂອງຜູ້ຮັບໃຊ້ຂອງເຮົາ ໂຈເຊັບ, **ຄພ** 124:89. ຖ້າຫາກຄົນໃດບໍ່ໄດ້ສະແຫວງຫາຄຳແນະນຳຂອງເຮົາ, ແລ້ວເຂົາຈະບໍ່ມີອຳນາດ, **ຄພ** 136:19.

**ຄຳບູລົມສຸກ.** *ເບິ່ງ* ເທດສະໜາຢູ່ໂນນພູ *ບຳອີກ*

ຄຳສອນຫລາຍພາກທີ່ພຣະເຢຊູໄດ້ເທດສະໜາຢູ່ໂນນພູ ຊຶ່ງບັນຍາຍຄຸນສົມບັດທີ່ງົດງາມ ແລະ ທາງວິນຍານ (ມທ 5:3–12; ລູກາ 6:20–23). ຄຳບູລົມສຸກໄດ້ຖືກຈັດໄວ້ໃນລັກສະນະທີ່ແຕ່ລະຂໍ້ໄດ້ຕໍ່ເຕີມໃຫ້ຂໍ້ທີ່ຜ່ານມາ. ບັນທຶກ

ກ່ຽວກັບຄຳບູລົມສຸກທີ່ລະອຽດ ແລະ ຖືກຕ້ອງກວ່າ ແມ່ນມີຢູ່ໃນ 3 ນຟ 12.

**ຄຳຫຍາບຄາຍ.** *ເບິ່ງ* ໝິ່ນປະໝາດ, ການໝິ່ນປະໝາດ *ນຳອີກ*

ບໍ່ມີຄວາມນັບຖື ຫລື ໝິ່ນປະໝາດສິ່ງສັກສິດ; ໂດຍສະເພາະ, ບໍ່ມີຄວາມຄາລະວະຕໍ່ພຣະນາມຂອງພຣະເຈົ້າ.

ຢ່າໃຊ້ຊື່ຂອງເຮົາໄປໃນທາງຊົ່ວຮ້າຍ ເພາະເຮົາແມ່ນອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ, **ອພຍ** 20:7 (2 ນຟ 26:32; ມຊຍ 13:15; ຄພ 136:21). ດ້ວຍເຫດໃດພວກເຮົາຈຶ່ງໝິ່ນປະໝາດພັນທະສັນຍາຂອງບັນພະບຸລຸດຂອງເຮົາ, **ມລກ** 2:10.

ຖ້ອຍຄຳເປົ່າໆທຸກຄຳທີ່ມະນຸດເວົ້າ ຈະຕ້ອງໃຫ້ການເພາະຄຳນັ້ນໃນວັນພິພາກສາ, **ມທ** 12:34–37. ຄຳສັນລະເສີນ ແລະ ຄຳປ້ອຍດ່າກໍອອກມາຈາກປາກອັນດຽວກັນ, ຊຶ່ງບໍ່ຄວນໃຫ້ເປັນຢ່າງນີ້ເລີຍ, **ຢກບ** 3:10.

ຄຳເວົ້າຂອງພວກເຮົາຈະກ່າວໂທດພວກເຮົາ, **ແອວ** 12:14 (ມຊຍ 4:30).

ໃຫ້ມະນຸດທັງປວງລະວັງວິທີທີ່ພວກເຂົາຈະໃຊ້ນາມຂອງເຮົາໃນປາກຂອງພວກເຂົາ, **ຄພ** 63:61–62.

**ຄຳອະທິຖານຂອງພຣະຜູ້ເປັນເຈົ້າ.** *ເບິ່ງ* ອະທິຖານ, ການອະທິຖານ, ຄຳອະທິຖານ *ນຳອີກ*

ການອະທິຖານທີ່ກ່າວໂດຍພຣະຜູ້ຊ່ວຍໃຫ້ລອດສຳລັບສານຸສິດຂອງພຣະອົງ ຊຶ່ງເປັນແບບແຜນໃຫ້ແກ່ການອະທິຖານທັງໝົດ (ມທ 6:9–13; 3 ນຟ 13:9–13).

**ຄຳອຸປະມາ**

ເລື່ອງເລົ່າທີ່ລຽບງ່າຍ ໃຊ້ເພື່ອສະແດງ ແລະ ສອນຄວາມຈິງ ຫລື ຫລັກທຳທາງວິນຍານ. ຄຳອຸປະມານັ້ນຂຶ້ນຢູ່ກັບການປຽບທຽບສິ່ງຂອງທຳມະດາ ຫລື ເຫດການ ໃສ່ກັບຄວາມຈິງ, ແລະ ຄວາມໝາຍຕົ້ນຕໍ ຫລື ຂ່າວສານຂອງຄຳອຸປະມາສ່ວນຫລາຍແລ້ວຈະສັບຊ້ອນຕໍ່ຜູ້ຟັງຜູ້ບໍ່ຕຽມພ້ອມທາງວິນຍານທີ່ຈະຮັບເອົາມັນ (ມທ 13:10–17).

ພຣະເຢຊູມັກຈະສອນດ້ວຍຄຳອຸປະມາ. ສຳລັບລາຍຊື່ຄຳອຸປະມາທີ່ສຳຄັນຂອງພຣະອົງ, ໃຫ້ເບິ່ງ ຄວາມກົມກຽວຂອງພຣະກິດຕິຄຸນ ໃນພາກທ້ອຍທ້າຍ.

**ຄວາມຄິດ.** *ເບິ່ງ* ໄຕ່ຕອງ; ອຳເພີໃຈ *ນຳອີກ*

ແນວຄິດ, ສິ່ງທີ່ຄິດຂຶ້ນ, ແລະ ພາບ ໃນຈິດໃຈຂອງບຸກຄົນ. ພະລັງທີ່ຈະຄິດ ເປັນຂອງປະທານຈາກພຣະເຈົ້າ, ແລະ ເຮົາມີອິດສະລະທີ່ຈະເລືອກ ວິທີທີ່ເຮົາຈະໃຊ້ພະລັງທີ່ຈະຄິດຂອງເຮົາ. ວິທີທີ່ເຮົາຄິດ ມີຄວາມກະທົບກະເທືອນຢ່າງໃຫຍ່ຫລວງຕໍ່ຄຸນສົມບັດ ແລະ ການປະພຶດ, ຕະຫລອດທັງຖານະຂອງເຮົາຫລັງຈາກຊີວິດນີ້. ຄວາມຄິດທີ່ຊອບທຳຈະນຳໄປສູ່ຄວາມລອດ; ຄວາມຄິດທີ່ຊົ່ວຮ້າຍຈະນຳໄປສູ່ຄວາມອັບປະໂຫຍດ.

ພຣະອົງຮູ້ຄວາມຄິດ ແລະ ຄວາມປາດຖະໜາທັງໝົດຂອງພວກເຮົາ, **1 ຂຄ** 28:9. ລາວຄິດແບບໃດ ລາວກໍເປັນຄົນແບບນັ້ນ, **ສພສ** 23:7. ຄວາມຄິດເຮົານັ້ນ ບໍ່ຄືຄວາມຄິດຂອງພວກເຈົ້າ, **ອຊຢ** 55:7–9.

ພຣະເຢຊູຮູ້ຄວາມຄິດຂອງພວກເຂົາ, **ມທ** 12:25 (ລກ 5:22; 6:8). ແມ່ນສິ່ງທີ່ອອກມາຈາກພາຍໃນມະນຸດນັ້ນແຫລະ ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ, **ມຣກ** 7:20–23. ປາບຄວາມຄິດທຸກປະການລົງໃຫ້ຢູ່ໃຕ້ບັງຄັບຈົນເຖິງນ້ອມຟັງພຣະຄຣິດ, **2 ກຣທ** 10:5. ສິ່ງໃດທີ່ຊັດຈິງ, ສິ່ງໃດທີ່ຍຸດຕິທຳ, ສິ່ງໃດທີ່ບໍລິສຸດ, ຫລື ສິ່ງໃດທີ່ໜ້າຮັກ, ຈົ່ງພິຈາລະນາເຖິງສິ່ງເຫລົ່ານີ້, **ຟລປ** 4:8.

ຈົ່ງຈຳໄວ້ວ່າ ການມີຈິດໃຈທີ່ເຕັມໄປດ້ວຍຕັນຫາຄືຄວາມຕາຍ, ແລະ ການມີຈິດໃຈທີ່ສະແຫວງຫາສິນທຳຄືຊີວິດນິລັນດອນ, **2 ນຟ** 9:39. ຖ້າຫາກພວກທ່ານບໍ່ລະວັງຕົວ, ແລະ ຄວາມນຶກຄິດຂອງພວກທ່ານ, ພວກທ່ານຈະຕ້ອງຕາຍ, **ມຊຍ** 4:30. ຄວາມນຶກຄິດຂອງພວກເຮົາຈະກ່າວໂທດພວກເຮົາ, **ແອວ** 12:14.

ພຣະເຈົ້າເທົ່ານັ້ນທີ່ຮູ້ຈັກເຖິງຄວາມນຶກຄິດ ແລະ ຄວາມເຈດຕະນາຂອງໃຈເຈົ້າ, **ຄພ** 6:16 (ຄພ 33:1). ຈົ່ງເບິ່ງທີ່ເຮົາໃນຄວາມນຶກຄິດ

ທຸກຢ່າງ, **ຄພ** 6:36. ໃຫ້ສະສົມຖ້ອຍຄຳແຫ່ງຊີວິດໄວ້ໃນຈິດໃຈຂອງພວກເຈົ້າອອກໄປ, **ຄພ** 84:85. ຈົ່ງຕັດຄວາມນຶກຄິດທີ່ໄຮ້ປະໂຫຍດຂອງພວກເຈົ້າ, **ຄພ** 88:69. ຄວາມນຶກຄິດໃນໃຈຂອງມະນຸດ ຈະຖືກເປີດເຜີຍ, **ຄພ** 88:109. ໃຫ້ຄຸນນະທຳປະດັບຄວາມນຶກຄິດຂອງທ່ານຢ່າງບໍ່ເສື່ອມຄາຍ, **ຄພ** 121:45.

ຄວາມນຶກຄິດຂອງມະນຸດ ມີຄວາມຊົ່ວຕະຫລອດເວລາ, **ມຊ** 8:22.

**ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ.** *ເບິ່ງ* ຈິງ, ຄວາມຈິງ; ສຳນຶກ, ຄວາມສຳນຶກ; ພຣະເຢຊູຄຣິດ; ພຣະວິນຍານບໍລິສຸດ; ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ *ນຳອີກ*

ພະລັງແຫ່ງສະຫວັນ, ອຳນາດ, ຫລື ອິດທິພົນທີ່ມາຈາກພຣະເຈົ້າຜ່ານພຣະຄຣິດ ແລະ ມອບຊີວິດ ແລະ ຄວາມສະຫວ່າງໃຫ້ແກ່ທຸກສິ່ງ. ມັນແມ່ນກົດ ຊຶ່ງໂດຍກົດນັ້ນທຸກສິ່ງໄດ້ຖືກປົກຄອງໃນສະຫວັນ ແລະ ເທິງແຜ່ນດິນໂລກ (ຄພ 88:6–13). ມັນຍັງຊ່ວຍເຫລືອຜູ້ຄົນໃຫ້ເຂົ້າໃຈຄວາມຈິງຂອງພຣະກິດຕິຄຸນນຳອີກ ແລະ ຊ່ວຍເຫລືອເຂົາເຈົ້າໃຫ້ໄປຫາທາງແຫ່ງພຣະກິດຕິຄຸນ ທີ່ນຳໄປສູ່ຄວາມລອດ (ຢຮ 3:19–21; 12:46; ແອວ 26:15; 32:35; ຄພ 93:28–29, 31–32, 40, 42).

ບໍ່ຄວນເຂົ້າໃຈຜິດເລື່ອງຄວາມສະຫວ່າງຂອງພຣະຄຣິດກັບພຣະວິນຍານບໍລິສຸດ. ຄວາມສະຫວ່າງຂອງພຣະຄຣິດບໍ່ແມ່ນບຸກຄົນ. ມັນເປັນອິດທິພົນທີ່ມາຈາກພຣະເຈົ້າ ແລະ ຕຽມບຸກຄົນໃຫ້ຮັບເອົາພຣະວິນຍານບໍລິສຸດ. ມັນເປັນອິດທິພົນສຳລັບຄວາມດີໃນຊີວິດຂອງຜູ້ຄົນທັງປວງ (ຢຮ 1:9; ຄພ 84:46–47).

ການສະແດງໃຫ້ປະຈັກຢ່າງໜຶ່ງຂອງຄວາມສະຫວ່າງຂອງພຣະຄຣິດແມ່ນຄວາມສຳນຶກ, ຊຶ່ງຊ່ວຍເຫລືອບຸກຄົນໃຫ້ເລືອກລະຫວ່າງຄວາມຖືກຕ້ອງ ແລະ ຄວາມຜິດ (ມຣນ 7:16). ເມື່ອຜູ້ຄົນຮຽນຮູ້ຫລາຍຂຶ້ນກ່ຽວກັບພຣະກິດຕິຄຸນ, ຄວາມສຳນຶກຂອງເຂົາຈະຮູ້ສຶກໄວຫລາຍຂຶ້ນ (ມຣນ 7:12–19). ຜູ້ຄົນທີ່ເຊື່ອຟັງຕໍ່ຄວາມສະຫວ່າງຂອງພຣະຄຣິດ ຈະຖືກພາໄປສູ່ພຣະກິດຕິຄຸນຂອງພຣະເຢຊູຄຣິດ (ຄພ 84:46–48).

ພຣະຜູ້ເປັນເຈົ້າເປັນຄວາມສະຫວ່າງຂອງຂ້າພຣະອົງ, **ພສສ** 27:1. ໃຫ້ພວກເຮົາເດີນໄປໃນຄວາມສະຫວ່າງ ຊຶ່ງພຣະຜູ້ເປັນເຈົ້າໄດ້ມອບໃຫ້ນັ້ນ, **ອຊຢ** 2:5 (2 ນຟ 12:5). ພຣະຜູ້ເປັນເຈົ້າຈະເປັນຄວາມສະຫວ່າງອັນເປັນນິດ, **ອຊຢ** 60:19.

ນີ້ແມ່ນຄວາມສະຫວ່າງອັນແທ້ຈິງ ຄືຄວາມສະຫວ່າງທີ່ເຂົ້າມາໃນໂລກ ແລະ ສ່ອງແກ່ຄົນທັງປວງ, **ຢຮ** 1:4–9 (ຢຮ 3:19; ຄພ 6:21; 34:1–3). ເຮົາເປັນຄວາມສະຫວ່າງຂອງໂລກ, **ຢຮ** 8:12 (ຢຮ 9:5; ຄພ 11:28).

ອັນໃດກໍຕາມທີ່ເປັນຄວາມສະຫວ່າງຍ່ອມດີ, **ແອວ** 32:35. ພຣະຄຣິດຄືຊີວິດ ແລະ ເປັນຄວາມສະຫວ່າງຂອງໂລກ, **ແອວ** 38:9 (3 ນຟ 9:18; 11:11; ອທ 4:12). ພຣະວິນຍານຂອງພຣະຄຣິດໄດ້ຖືກມອບໃຫ້ແກ່ມະນຸດທຸກຄົນ ເພື່ອເຂົາຈະຮູ້ຈັກຄວາມດີຈາກຄວາມຊົ່ວ, **ມຣນ** 7:15–19.

ສິ່ງທີ່ມາຈາກພຣະເຈົ້າເປັນຄວາມສະຫວ່າງ, ຄວາມສະຫວ່າງນັ້ນຈະຮຸ່ງແຈ້ງຫລາຍຂຶ້ນໄປເລື້ອຍໆ ຈົນເຖິງວັນທີ່ສົມບູນ, **ຄພ** 50:24. ພຣະວິນຍານໃຫ້ຄວາມສະຫວ່າງແກ່ມະນຸດທຸກຄົນ, **ຄພ** 84:45–48 (ຄພ 93:1–2). ຄົນທີ່ຮັກສາພຣະບັນຍັດຂອງພຣະອົງຈະໄດ້ຮັບຄວາມສະຫວ່າງ ແລະ ຄວາມຈິງ, **ຄພ** 93:27–28. ຄວາມສະຫວ່າງ ແລະ ຄວາມຈິງຈະປະຖິ້ມມານຮ້າຍຜູ້ນັ້ນ, **ຄພ** 93:37.

**ຄວາມສຸກ.** *ເບິ່ງ* ຊື່ນຊົມ, ຄວາມຊື່ນຊົມ

**ຄວາມຕາຍຄັ້ງທີສອງ.** *ເບິ່ງ* ຄວາມຕາຍທາງວິນຍານ

**ຄວາມຕາຍທາງວິນຍານ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ນະລົກ; ບຸດແຫ່ງຄວາມຈິບຫາຍ; ມານ; ລອດ, ຄວາມລອດ; ອັບປະໂຫຍດ, ຄວາມອັບປະໂຫຍດ *ນຳອີກ*

ການແຍກອອກຈາກພຣະເຈົ້າ ແລະ ອິດທິພົນຂອງພຣະອົງ; ທີ່ຈະຕາຍໃນເລື່ອງທີ່ກ່ຽວ

ກັບ ຄວາມ ຊອບ ທຳ. ລູ ຊິ ເຟີ ແລະ ໜຶ່ງ ສ່ວນສາມຂອງເຫລົ່າສະຫວັນໄດ້ຮັບທຸກທໍລະມານກັບຄວາມ ຕາຍ ທາງວິນຍານ ເມື່ອພວກ ເຂົາຖືກຂັບ ໄລ່ອອກຈາກສະຫວັນ (ຄພ 29:36–37).

ຄວາມຕາຍທາງວິນຍານໄດ້ມາສູ່ໂລກໂດຍການຕົກຂອງອາດາມ (ມຊ 6:48). ມະນຸດທີ່ມີຄວາມຄິດ, ຄຳເວົ້າ, ແລະ ວຽກງານຊົ່ວ ແມ່ນຕາຍແລ້ວທາງວິນຍານ ໃນຂະນະທີ່ຍັງມີຊີວິດຢູ່ເທິງແຜ່ນດິນໂລກ (1 ຕມທ 5:6). ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດ ແລະ ໂດຍການເຊື່ອຟັງຕໍ່ຫລັກທຳ ແລະ ພິທີການຂອງພຣະກິດຕິຄຸນ, ຊາຍ ແລະ ຍິງຈຶ່ງສາມາດກັບມາສະອາດຈາກບາບ ແລະ ເອົາຊະນະຄວາມຕາຍທາງວິນຍານ.

ຄວາມຕາຍທາງວິນຍານກໍຍັງເກີດຂຶ້ນຫລັງຈາກການຕາຍຂອງຮ່າງກາຍທີ່ເປັນມະຕະອີກ. ທັງຄົນທີ່ໄດ້ຟື້ນຄືນຊີວິດແລ້ວ ແລະ ມານພ້ອມທັງບໍລິວານຂອງມັນຈະຖືກພິພາກສາ. ຜູ້ທີ່ກະບົດດ້ວຍຄວາມເຕັມໃຈ ຕໍ່ຕ້ານຄວາມສະຫວ່າງ ແລະ ຄວາມຈິງຂອງພຣະກິດຕິຄຸນຈະໄດ້ຮັບທຸກທໍລະມານກັບຄວາມຕາຍທາງວິນຍານ. ຄວາມຕາຍນີ້ກໍຖືກເອີ້ນວ່າ ຄວາມຕາຍເທື່ອທີສອງ (ແອວ 12:16; ຮລມ 14:16–19; ຄພ 76:36–38).

ຄົນຊົ່ວຈະຖືກຂັບໄລ່ໜີໄປສິ້ນ, **ພສສ** 37:9. ການເອົາໃຈໃສ່ກັບທຳມະຊາດຂອງມະນຸດກໍຄືຄວາມຕາຍ, **ຣມ** 8:6 (2 ນຟ 9:39). ກິເລດຕັນຫາຈ່ອງດຶງຄົນເຫລົ່ານັ້ນລົງສູ່ຄວາມພິນາດ ແລະ ຈິບຫາຍ, **1 ຕມທ** 6:9. ບາບນຳຄວາມຕາຍມາໃຫ້, **ຢກບ** 1:15. ຜູ້ທີ່ມີໄຊຊະນະຈະບໍ່ຖືກອັນຕະລາຍຈາກຄວາມຕາຍຄັ້ງທີສອງ, **ພນມ** 2:11. ຄວາມຕາຍຄັ້ງທີສອງຈະບໍ່ມີອຳນາດເໜືອຄົນເຫລົ່ານັ້ນ, **ພນມ** 20:6, 12–14. ຄົນຊົ່ວຈະມີພາກສ່ວນໃນບຶງໄຟທີ່ໄໝ້ຢູ່ປົນກັບມາດ: ຊຶ່ງເປັນຄວາມຕາຍຄັ້ງທີສອງ, **ພນມ** 21:8 (ຄພ 63:17–18).

ມະນຸດເປັນອິດສະລະທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ ຫລື ຈະເລືອກການເປັນຊະເລີຍ ແລະ ຄວາມຕາຍ, **2 ນຟ** 2:27 (2 ນຟ 10:23; ແອວ 29:5; ຮລມ 14:30–31). ພຣະເຈົ້າໄດ້ຕຽມທາງເພື່ອການໜີຂອງພວກເຮົາຈາກຄວາມຕາຍ ແລະ ນະລົກ, **2 ນຟ** 9:10. ເຮັດໃຫ້ຕົວຫລຸດພົ້ນອອກຈາກຄວາມເຈັບປວດແຫ່ງນະລົກ ເພື່ອພວກທ່ານຈະບໍ່ໄດ້ຮັບທຸກທໍລະມານກັບຄວາມຕາຍເທື່ອທີສອງ, **ຢຄ** 3:11. ມະນຸດທີ່ມີຈິດໃຈທຳມະດາເປັນສັດຕູຂອງພຣະເຈົ້າ, **ມຊຢ** 3:19. ຂໍໃຫ້ພຣະຜູ້ເປັນເຈົ້າຈົ່ງປະທານການກັບໃຈໃຫ້ແກ່ພວກທ່ານດ້ວຍເຖີດ ເພື່ອພວກທ່ານຈະບໍ່ໄດ້ຮັບຄວາມເຈັບປວດຈາກຄວາມຕາຍເທື່ອທີສອງ, **ແອວ** 13:30. ແອວມາຖືກປິດລ້ອມດ້ວຍສາຍໂສ້ແຫ່ງຄວາມຕາຍອັນເປັນນິດ, **ແອວ** 36:18. ຄົນຊົ່ວຕາຍໃນເລື່ອງທີ່ກ່ຽວກັບຄວາມຊອບທຳ, **ແອວ** 40:26 (ແອວ 12:16). ການຕົກນຳເອົາຄວາມຕາຍທາງວິນຍານມາສູ່ມະນຸດຊາດທັງປວງ, **ແອວ** 42:9 (ຮລມ 14:16–18).

ເມື່ອອາດາມຕົກ, ລາວຈຶ່ງຕາຍທາງວິນຍານ, **ຄພ** 29:40–41, 44.

**ຄວາມຕາຍທາງຮ່າງກາຍ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ມະຕະ, ຄວາມເປັນມະຕະ; ລອດ, ຄວາມລອດ *ນຳອີກ*

ການ ແຍກ ຂອງ ຮ່າງ ກາຍ ແລະ ວິນ ຍານອອກ ຈາກກັນ. ການ ຕົກ ໄດ້ ນຳ ຄວາມ ເປັນມະຕະ ແລະ ຄວາມຕາຍ ມາສູ່ແຜ່ນດິນ ໂລກ (2 ນຟ 2:22; ມຊ 6:48). ການຊົດໃຊ້ຂອງພຣະເຢຊູຄຣິດໄດ້ເອົາຊະນະຄວາມຕາຍ ເພື່ອວ່າທຸກຄົນຈະ ໄດ້ຟື້ນຄືນຊີວິດ (1 ກຣທ 15:21–23). ການຟື້ນຄືນຊີວິດແມ່ນມີໃຫ້ລ້າໆສຳລັບທຸກຄົນ ບໍ່ວ່າເຂົາໄດ້ເຮັດຄວາມດີ ຫລື ຄວາມຊົ່ວໃນຊີວິດນີ້ກໍຕາມ (ແອວ 11:42–44). ແຕ່ລະຄົນຈະປະສົບກັບການຕາຍທາງຮ່າງກາຍພຽງເທື່ອດຽວ ເພາະວ່າຫລັງຈາກເຮົາໄດ້ຟື້ນຄືນຊີວິດແລ້ວ, ຮ່າງກາຍຂອງເຮົາຈະບໍ່ຕາຍອີກຕໍ່ໄປ (ແອວ 11:45).

ທຸກໆຄົນທີ່ມີຊີວິດຢູ່ກໍຈະຕາຍໄປໝົດ ຕ່າງກໍຈະພາກັນກັບຄືນເປັນຂີ້ຝຸ່ນດິນອີກ, **ໂຢບ**

34:15. ເມື່ອຜູ້ໜຶ່ງໃນປະຊາຊົນຂອງພຣະເຈົ້າຕາຍໄປ ພຣະອົງກໍໂສກເສົ້າ ເສຍໃຈແທ້ໆ, **ພສສ** 116:15. ຮ່າງກາຍຂອງພວກເຮົາຈະກັບເປັນຂີ້ຝຸ່ນດິນອີກ, ແລະ ວິນຍານຂອງພວກເຮົາກໍຈະກັບຄືນໄປຫາພຣະເຈົ້າ, **ປຍຈ** 12:7.

ຄວາມຕາຍໄດ້ມີມາທາງມະນຸດ, **1 ກຣທ** 15:21. ພຣະຜູ້ຊ່ວຍໃຫ້ລອດຖືລູກກະແຈແຫ່ງຄວາມຕາຍ ແລະ ແດນມໍລະນາ, **ພນມ** 1:18. ຈະບໍ່ມີຄວາມຕາຍ, ຫລື ຄວາມໂສກເສົ້າອີກຕໍ່ໄປ, **ພນມ** 21:4.

ຄວາມຕາຍຜ່ານມາຫາມະນຸດທັງປວງ, **2 ນຟ** 9:6, 11 (ແອວ 12:24). ພວກເຂົາບໍ່ເຄີຍຫລຽວເບິ່ງຄວາມຕາຍດ້ວຍຄວາມສະທ້ານຢ້ານກົວ, **ແອວ** 27:28. ແອວມາໄດ້ອະທິບາຍກ່ຽວກັບສະພາບຂອງຈິດວິນຍານ ລະຫວ່າງການຕາຍກັບການຟື້ນຄືນຊີວິດ, **ແອວ** 40:11.

ຄົນທີ່ຕາຍໃນເຮົາ ຈະບໍ່ໄດ້ຊີມລົດຊາດຂອງຄວາມຕາຍ, **ຄພ** 42:46. ຄົນທີ່ບໍ່ໄດ້ຖືກກຳນົດໃຫ້ຕາຍຈະຫາຍດີ, **ຄພ** 42:48. ເຮົາຈະພິສູດພວກເຈົ້າໃນທຸກສິ່ງທັງປວງ ແມ່ນແຕ່ຈົນເຖິງຄວາມຕາຍ, **ຄພ** 98:14.

ເຈົ້າຈະຄືນໄປເປັນດິນອີກ, **ມຊ** 4:25. ອາດາມຕົກ, ແລະ ໂດຍການຕົກຂອງເພິ່ນຄວາມຕາຍຈຶ່ງໄດ້ມາເຖິງ, **ມຊ** 6:48.

**ຄວາມເປັນຢູ່ທາງໂລກ.** *ເບິ່ງ* ເງິນ; ຈອງຫອງ, ຄວາມຈອງຫອງ; ອວດອົ່ງ, ຄວາມອວດອົ່ງ; ຮັ່ງມີ, ຄວາມຮັ່ງມີ *ນຳອີກ*

ຄວາມປາດຖະໜາທີ່ບໍ່ຊອບທຳ ແລະ ຄວາມພະຍາຍາມສຳລັບຄວາມລ້ຳລວຍ ແລະ ສິ່ງຂອງທາງໂລກ ໃນຂະນະທີ່ປະຖິ້ມສິ່ງທີ່ເປັນທາງວິນຍານ.

ຖ້າຄົນໃດຄົນໜຶ່ງຈະໄດ້ຊັບສົມບັດໝົດທັງໂລກ ແຕ່ຕ້ອງເສຍຈິດວິນຍານຂອງຕົນ ຄົນນັ້ນຈະໄດ້ປະໂຫຍດອັນໃດ, **ມທ** 16:26.

ພວກເຂົາໝົກໝຸ້ນຢູ່ກັບສິ່ງທີ່ບໍ່ມີປະໂຫຍດຂອງໂລກ, **ແອວ** 4:8 (ແອວ 31:27).

ຈົ່ງປ່ອຍວາງສິ່ງທີ່ເປັນຂອງໂລກນີ້, **ຄພ** 25:10. ໃຈຂອງມະນຸດໝົກໝຸ້ນຢູ່ກັບສິ່ງທີ່ເປັນຂອງໂລກນີ້ຫລາຍ, **ຄພ** 121:35.

**ຄວາມຜາສຸກ.** *ເບິ່ງ* ເຄື່ອງຖວາຍ; ຍາກຈົນ; ຖືສິນອົດເຂົ້າ, ການຖືສິນອົດເຂົ້າ; ໃຫ້ທານ, ການໃຫ້ທານ; ຮັບໃຊ້, ການຮັບໃຊ້ *ນຳອີກ*

ຂັ້ນຕອນຂອງ ແລະ ວິທີສຳລັບການດູແລຄວາມຕ້ອງການທາງວິນຍານ ແລະ ທາງໂລກຂອງຜູ້ຄົນ.

ຈົ່ງມີໃຈກວ້າງຂວາງຕໍ່ຄົນຍາກຈົນ ກັບຄົນຂັດສົນ ໃນດິນແດນຂອງພວກເຈົ້າ, **ພບຍ** 15:11. ຜູ້ທີ່ໃຫ້ທານແກ່ຄົນທຸກ ຈະບໍ່ຂັດສົນເລີຍ, **ສພສ** 28:27. ສິ່ງນີ້ບໍ່ແມ່ນການຖືສິນອົດເຂົ້າທີ່ເຮົາໄດ້ເລືອກບໍ? ຈົ່ງແບ່ງປັນອາຫານໃຫ້ແກ່ຜູ້ທີ່ອຶດຫິວ, ຈົ່ງໃຫ້ທີ່ພັກແກ່ຜູ້ທີ່ຍາກຈົນ, **ອຊຢ** 58:6–7.

ເມື່ອເຮົາຫິວເຂົ້າ ພວກເຈົ້າກໍເອົາໃຫ້ເຮົາກິນ; ເມື່ອເຮົາຫິວນ້ຳ ພວກເຈົ້າກໍເອົາໃຫ້ເຮົາດື່ມ. ເມື່ອພວກເຈົ້າໄດ້ເຮັດສິ່ງເຫລົ່ານີ້ ແກ່ຜູ້ທີ່ຕ່ຳຕ້ອຍທີ່ສຸດຄົນໜຶ່ງໃນພວກພີ່ນ້ອງເຫລົ່ານີ້ຂອງເຮົາ, ພວກເຈົ້າກໍໄດ້ເຮັດແກ່ເຮົາເໝືອນກັນ, **ມທ** 25:35–40.

ຈົ່ງໃຫ້ເຂົ້າຂອງແກ່ຄົນທີ່ຂັດສົນ, **ມຊຢ** 4:16–26. ພວກເຂົາໄດ້ແຈກຢາຍໃຫ້ກັນຕາມຄວາມຈຳເປັນ ແລະ ຄວາມຕ້ອງການຂອງເຂົາທາງໂລກ ແລະ ທາງວິນຍານ, **ມຊຢ** 18:29. ພວກເຂົາໄດ້ຖືກບັນຊາໃຫ້ຮ່ວມກັນຖືສິນອົດເຂົ້າ ແລະ ອະທິຖານ ເພື່ອຄວາມຜາສຸກຂອງຜູ້ທີ່ບໍ່ຮູ້ຈັກພຣະເຈົ້າ, **ແອວ** 6:6. ຈົ່ງອະທິຖານເພື່ອຄວາມຜາສຸກຂອງພວກທ່ານ ແລະ ເພື່ອຄວາມຜາສຸກຂອງຄົນທີ່ຢູ່ອ້ອມຮອບພວກທ່ານ, **ແອວ** 34:27–28. ພວກເຂົາມີເຂົ້າຂອງທັງໝົດນຳກັນເປັນສ່ວນລວມ, **4 ນຟ** 1:3.

ຈົ່ງນຶກເຖິງຄົນຍາກຈົນ, **ຄພ** 42:30–31. ຢ້ຽມຢາມຄົນຍາກຈົນ ແລະ ຄົນຂັດສົນ, **ຄພ** 44:6. ໃນທຸກສິ່ງໃຫ້ຈື່ຈຳຄົນຍາກຈົນ ແລະ ຄົນຂັດສົນ, **ຄພ** 52:40. ວິບັດແກ່ພວກເຈົ້າຄົນທີ່ຮັ່ງມີ ທີ່ຈະບໍ່ມອບເຂົ້າຂອງຂອງພວກເຈົ້າໃຫ້ແກ່ຄົນຍາກຈົນ, ແລະ ວິບັດແກ່ພວກເຈົ້າຄົນທີ່ຍາກຈົນ, ຜູ້ທີ່ບໍ່ເຄີຍອີ່ມ, ແລະ ຜູ້ທີ່ໂລບມາກໂລພາ ແລະ ຈະບໍ່ອອກແຮງ, **ຄພ** 56:16–17.

ໃນຊີໂອນ ບໍ່ມີຄົນຍາກຈົນໃນບັນດາພວກເຂົາ, **ມຊ** 7:18.

**ຄວາມມືດຂ້າງນອກ.** *ເບິ່ງ* ຄວາມຕາຍທາງວິນຍານ; ນະລົກ; ບຸດແຫ່ງຄວາມຈິບຫາຍ; ມານ

**ຄວາມມືດທາງວິນຍານ.** *ເບິ່ງ* ຊົ່ວຮ້າຍ, ຄວາມຊົ່ວຮ້າຍ *ນຳອີກ*

ຄວາມຊົ່ວຮ້າຍ ຫລື ຄວາມໂງ່ຈ້າຂອງສິ່ງທີ່ເປັນທາງວິນຍານ.

ເຄາະກຳເປັນຂອງຄົນທີ່ປ່ຽນມືດເປັນແຈ້ງ, **ອຊຢ** 5:20 (2 ນຟ 15:20). ຄວາມມືດຈະປົກຄຸມແຜ່ນດິນໂລກ, ແລະ ຄວາມມືດຈະປົກຄຸມພວກເຂົາ, **ອຊຢ** 60:2.

ພຣະເຢຊູ ຈະສ່ອງ ສະຫວ່າງແກ່ຄົນທັງຫລາຍ ທີ່ຢູ່ ໃນບ່ອນມືດ, **ລກ** 1:79. ຄວາມສະຫວ່າງສ່ອງ ເຂົ້າມາ ໃນ ຄວາມ ມືດ ແລະ ຄວາມມືດນັ້ນກໍເອົາຊະນະຄວາມສະຫວ່າງບໍ່ໄດ້ຈັກເທື່ອ, **ຢຮ** 1:5 (ຄພ 45:7). ກາງຄືນກໍລ່ວງໄປຫລາຍແລ້ວ ແລະ ກາງເວັນກໍໃກ້ເຂົ້າມາແລ້ວ, **ຣມ** 13:12. ຢ່າເຂົ້າໄປມີສ່ວນໃດໆກັບການກະທຳຝ່າຍຄວາມມືດອັນບໍ່ມີປະໂຫຍດຫຍັງ, **ອຟຊ** 5:8–11.

ເພາະພວກທ່ານບໍ່ທູນຖາມ, ພວກທ່ານຈຶ່ງບໍ່ຖືກພາມາຫາຄວາມສະຫວ່າງ ແຕ່ຕ້ອງຕາຍຢູ່ໃນຄວາມມືດ, **2 ນຟ** 32:4. ຊາຕານເຜີຍແຜ່ວຽກງານແຫ່ງຄວາມມືດ, **ຮລມ** 6:28–31.

ອຳນາດແຫ່ງຄວາມມືດແຜ່ຂະຫຍາຍໄປທົ່ວແຜ່ນດິນໂລກ, **ຄພ** 38:8, 11–12. ໂລກທັງໂລກຮ້ອງຄວນຄາງຢູ່ພາຍໃຕ້ຄວາມມືດ ແລະ ບາບ, **ຄພ** 84:49–54. ຖ້າຫາກດວງຕາຂອງພວກເຈົ້າເຫັນແກ່ລັດສະໝີພາບຂອງເຮົາແຕ່ຢ່າງດຽວ, ຈະບໍ່ມີຄວາມມືດໃນພວກເຈົ້າ, **ຄພ** 88:67.

ວຽກງານ ແຫ່ງຄວາມມືດຈຶ່ງໄດ້ເລີ່ມແຜ່ອອກໄປໃນບັນດາພວກລູກຊາຍທັງປວງຂອງມະນຸດ, **ມຊ** 5:55.

**ຄວາມມືດພາຍນອກ.** *ເບິ່ງ* ນະລົກ

**ຄວາມລຶກລັບຂອງພຣະເຈົ້າ**

ຄວາມລຶກລັບຂອງພຣະເຈົ້າເປັນຄວາມຈິງທາງວິນຍານ ຊຶ່ງຮູ້ດ້ວຍໂດຍທາງການເປີດເຜີຍເທົ່ານັ້ນ. ພຣະເຈົ້າເປີດເຜີຍຄວາມລຶກລັບຂອງພຣະອົງຕໍ່ຄົນທີ່ເຊື່ອຟັງພຣະກິດຕິຄຸນ. ຄວາມລຶກລັບບາງຢ່າງຂອງພຣະເຈົ້າຍັງບໍ່ໄດ້ຖືກເປີດເຜີຍເທື່ອ.

ພຣະເຈົ້າໄດ້ໂຜດໃຫ້ພວກເຈົ້າຮູ້ເຖິງຄວາມລຶກລັບຂອງອານາຈັກສະຫວັນ, **ມທ** 13:11. ເຖິງແມ່ນເຮົາເຂົ້າໃຈຄວາມລຶກລັບທັງປວງ ແຕ່ບໍ່ມີຄວາມໃຈບຸນ, ເຮົາກໍບໍ່ມີຄ່າອັນໃດ, **1 ກຣທ** 13:2.

ນີໄຟມີຄວາມຮູ້ຢ່າງໃຫຍ່ຫລວງເຖິງຄວາມລຶກລັບຂອງພຣະເຈົ້າ, **1 ນຟ** 1:1. ມັນໄດ້ຖືກມອບໃຫ້ຫລາຍຄົນເພື່ອຈະຮູ້ຄວາມລຶກລັບຂອງພຣະເຈົ້າ, **ແອວ** 12:9. ພຣະເຈົ້າຈະເຮັດໃຫ້ຄົນເຊັ່ນນັ້ນຮູ້ເຖິງຄວາມລຶກລັບຂອງພຣະເຈົ້າ, **ແອວ** 26:22. ຄວາມລຶກລັບເຫລົ່ານີ້ຍັງບໍ່ທັນເປັນທີ່ຮູ້ໂດຍສົມບູນແກ່ພໍ່, **ແອວ** 37:11. ມີຄວາມລຶກລັບຫລາຍຢ່າງທີ່ມະນຸດບໍ່ຮູ້ຈັກນອກຈາກພຣະເຈົ້າເອງ, **ແອວ** 40:3.

ຄວາມລຶກລັບຂອງຄວາມເປັນເໝືອນພຣະເຈົ້າຊ່າງຍິ່ງໃຫຍ່ພຽງໃດ, **ຄພ** 19:10. ຖ້າພວກເຈົ້າຖາມ, ພວກເຈົ້າຈະໄດ້ຮັບການເປີດເຜີຍ ແລະ ຮູ້ຄວາມລຶກລັບຂອງອານາຈັກ, **ຄພ** 42:61, 65 (1 ກຣທ 2:7, 11–14). ຄົນທີ່ຮັກສາພຣະບັນຍັດ ຈະໄດ້ຮັບຄວາມລຶກລັບຂອງອານາຈັກ, **ຄພ** 63:23. ຕໍ່ພວກເຂົາເຮົາຈະເປີດເຜີຍຄວາມລຶບລັບທັງປວງ, **ຄພ** 76:7. ຖານະປະໂລຫິດທີ່ສູງກວ່າຖືຂໍກະແຈແຫ່ງຄວາມລຶກລັບ, **ຄພ** 84:19. ຕອນພຣະອົງສະເດັດມາ ພຣະຜູ້ເປັນເຈົ້າຈະເປີດເຜີຍສິ່ງລີ້ລັບຊຶ່ງບໍ່ມີຄົນໃດຮູ້, **ຄພ** 101:32–33. ຖານະປະໂລຫິດແຫ່ງເມນຄີເສເດັກມີສິດທິພິເສດທີ່ຈະໄດ້ຮັບເອົາຄວາມລຶກລັບຂອງອານາຈັກ, **ຄພ** 107:19.

**ຄວາມລອດ, ແຜນແຫ່ງ.** *ເບິ່ງ* ແຜນແຫ່ງການໄຖ່

**ຄວາມລອດຂອງເດັກນ້ອຍ.** *ເບິ່ງ* ເດັກ, ເດັກນ້ອຍ; ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ

**ຄວາມລອດສຳລັບຄົນຕາຍ.** *ເບິ່ງ* ປຶ້ມແຫ່ງຄວາມຊົງຈຳ; ແຜນແຫ່ງການໄຖ່; ລອດ,

ຄວາມລອດ; ລຳດັບການສືບເຊື້ອສາຍ *ນຳອີກ*

ໂອກາດສຳລັບຜູ້ທີ່ໄດ້ຕາຍໄປປາດສະຈາກການໄດ້ຮັບພິທີການຊ່ວຍໃຫ້ລອດຂອງພຣະກິດຕິຄຸນ ເພື່ອໃຫ້ພິທີການເຫລົ່ານີ້ຖືກກະທຳແທນເຂົາເຈົ້າຢູ່ໃນພຣະວິຫານ ໂດຍສະມາຊິກຜູ້ມີຄ່າຄວນທີ່ມີຊີວິດຢູ່ ຂອງສາດສະໜາຈັກ. ຄົນຕາຍໄດ້ຖືກສິດສອນພຣະກິດຕິຄຸນ ຢູ່ໃນໂລກວິນຍານ ແລະ ອາດຮັບເອົາພິທີການທີ່ຖືກກະທຳແທນເຂົາເຈົ້າ ຢູ່ໃນໂລກມະຕະ.

ສະມາຊິກທີ່ຊື່ສັດຂອງສາດສະໜາຈັກ ໄດ້ຊອກຫາ ແລະ ຕຽມປະຫວັດຄອບຄົວ ເພື່ອພິຈາລະນາລາຍຊື່ ແລະ ວັນເກີດຂອງບັນພະບຸລຸດ ເພື່ອວ່າພິທີການຊ່ວຍໃຫ້ລອດຈະໄດ້ຖືກກະທຳແທນເຂົາເຈົ້າ.

ກ່າວແກ່ພວກທີ່ເປັນຊະເລີຍວ່າ, ຈົ່ງພາກັນໄປເປັນອິດສະລະເຖີດ, **ອຊຢ** 49:9 (ອຊຢ 24:22; 1 ນຟ 21:9). ປະກາດການປົດປ່ອຍແກ່ຊະເລີຍເສິກ, **ອຊຢ** 61:1 (ລກ 4:18). ລາວຈະນຳພໍ່ກັບລູກມາພົບກັນອີກ, **ມລກ** 4:5–6 (3 ນຟ 25:5–6; ຄພ 110:13–16).

ຜູ້ຕາຍແລ້ວຈະໄດ້ຍິນສຸລະສຽງພຣະບຸດຂອງພຣະເຈົ້າ, **ຢຮ** 5:25. ຖ້າບໍ່ເປັນຢ່າງນັ້ນ ຄົນທັງຫລາຍທີ່ຮັບບັບຕິສະມາເພື່ອຄົນຕາຍນັ້ນ ຈະໝາຍຄວາມວ່າຢ່າງໃດ, **1 ກຣທ** 15:29. ພຣະຄຣິດໄດ້ໄປປະກາດແກ່ບັນດາວິນຍານທີ່ຖືກຄຸກຢູ່, **1 ປຕ** 3:18–20. ດ້ວຍເຫດນີ້ແຫລະ ຂ່າວປະເສີດໄດ້ປະກາດແກ່ພວກຄົນທີ່ຕາຍໄປແລ້ວເໝືອນກັນ, **1 ປຕ** 4:6.

ພຣະບຸດໄດ້ໄປຢ້ຽມຢາມບັນດາວິນຍານຢູ່ໃນຄຸກ, **ຄພ** 76:73. ຈາກນັ້ນການໄຖ່ຄົນເຫລົ່ານັ້ນ ຈະເກີດກັບຜູ້ທີ່ໄດ້ຮັບສ່ວນຂອງພວກເຂົາໃນຄຸກ, **ຄພ** 88:99. ອ່າງບັບຕິສະມາບໍ່ໄດ້ມີຢູ່ເທິງແຜ່ນດິນໂລກ ເພື່ອວ່າໄພ່ພົນຂອງເຮົາຈະໄດ້ຮັບບັບຕິສະມາແທນຄົນທີ່ໄດ້ລ່ວງລັບໄປແລ້ວ, **ຄພ** 124:29. ທຸກຄົນທີ່ໄດ້ຕາຍໄປ ຜູ້ທີ່ຈະຮັບເອົາພຣະກິດຕິຄຸນ ຈະເປັນທາຍາດແຫ່ງອານາຈັກຊັ້ນສູງ, **ຄພ** 137:7–10. ພຣະບຸດຂອງພຣະເຈົ້າໄດ້ມາປະກົດ ໂດຍປະກາດເສລີພາບແກ່ຊະເລີຍຜູ້ຊື່ສັດຕະຫລອດມາ, **ຄພ** 138:18.

ວິນຍານຫລາຍຕໍ່ຫລາຍດວງທີ່ຢູ່ໃນຄຸກໄດ້ອອກມາ, **ມຊ** 7:57.

**ຄວາມຮູ້.** *ເບິ່ງ* ເຂົ້າໃຈ, ຄວາມເຂົ້າໃຈ; ຈິງ, ຄວາມຈິງ; ສະຕິປັນຍາ *ນຳອີກ*

ຄວາມເຂົ້າໃຈ ແລະ ຄວາມແຈ່ມແຈ້ງ, ໂດຍສະເພາະເລື່ອງຄວາມຈິງທີ່ສອນ ຫລື ຢືນຢັນໂດຍພຣະວິຫານ.

ພຣະຜູ້ເປັນເຈົ້າເປັນພຣະເຈົ້າຜູ້ຮູ້ເຫັນ, **1 ຊມອ** 2:3. ພຣະຜູ້ເປັນເຈົ້າມີຄວາມຮູ້ຮອບດ້ານ, **ໂຢບ** 37:16. ການຢຳເກງພຣະຜູ້ເປັນເຈົ້າ ເປັນບໍ່ເກີດແຫ່ງປັນຍາ, **ສພສ** 1:7. ຄົນທີ່ມີຄວາມເຂົ້າໃຈຢ່າງແທ້ຈິງເປັນຄົນມິດງຽບຢູ່, **ສພສ** 17:27. ຄົນທີ່ຮູ້ເຖິງພຣະຜູ້ເປັນເຈົ້າຈະມີຢູ່ເຕັມດິນແດນ, **ອຊຢ** 11:9 (2 ນຟ 21:9; 30:15).

ພວກເຈົ້າໄດ້ເອົາກະແຈທີ່ໄຂໄປສູ່ຄວາມຮູ້ໄວ້, **ລກ** 11:52. ຄວາມຮັກຂອງພຣະຄຣິດເກີນກວ່າຄວາມຮູ້, **ອຟຊ** 3:19. ເພື່ອຈະເອົາຄຸນນະທຳເພີ່ມຄວາມເຊື່ອ, ແລະ ເອົາຄວາມຮູ້ເພີ່ມຄວາມດີ, **2 ປຕ** 1:5.

ນີໄຟມີຄວາມຮູ້ຢ່າງໃຫຍ່ຫລວງເຖິງພຣະກະລຸນາທິຄຸນຂອງພຣະເຈົ້າ, **1 ນຟ** 1:1. ພວກເຂົາຈະມາຮູ້ກ່ຽວກັບພຣະຜູ້ໄຖ່ຂອງພວກເຂົາ, **2 ນຟ** 6:11. ຄົນຊອບທຳຈະມີຄວາມຮູ້ອັນສົມບູນກ່ຽວກັບຄວາມຊອບທຳຂອງພວກເຂົາ, **2 ນຟ** 9:14. ພຣະວິນຍານໃຫ້ຄວາມຮູ້, **ແອວ** 18:35. ຄວາມຮູ້ຂອງພວກທ່ານສົມບູນໃນເລື່ອງນັ້ນ, **ແອວ** 32:34. ຊາວເລມັນຈະມາສູ່ຄວາມຮູ້ທີ່ແທ້ຈິງ ເຖິງພຣະຜູ້ໄຖ່ຂອງພວກເຂົາ, **ຮລມ** 15:13. ພວກທ່ານຈະຮູ້ດ້ວຍຄວາມຮູ້ອັນສົມບູນວ່າສິ່ງນັ້ນມາຈາກພຣະເຈົ້າ, **ມຣນ** 7:15–17.

ໄພ່ພົນຂອງພຣະເຈົ້າຈະພົບຂຸມຊັບແຫ່ງຄວາມຮູ້, **ຄພ** 89:19. ຄວາມຮູ້ອັນບໍລິສຸດຈະຂະຫຍາຍວິນຍານອອກໄປຢ່າງກວ້າງຂວາງ, **ຄພ** 121:42. ຜູ້ທີ່ມີຂໍກະແຈຂອງຖານະປະໂລຫິດທີ່ສັກສິດ ບໍ່ມີຄວາມຫຍຸ້ງຍາກໃນການໄດ້

ຮັບຄວາມຮູ້ເລື່ອງຄວາມຈິງ, **ຄພ** 128:11. ຖ້າຫາກບຸກຄົນໃດໄດ້ຮັບຄວາມຮູ້ໃນຊີວິດນີ້, ບຸກຄົນນັ້ນຈະມີມັນຫລາຍກວ່າຄົນອື່ນຢູ່ໃນໂລກທີ່ຈະມາເຖິງ, **ຄພ** 130:19. ເປັນໄປບໍ່ໄດ້ທີ່ຈະລອດໃນຄວາມໂງ່ຈ້າ, **ຄພ** 131:6.

**ງູທອງ.** *ເບິ່ງ* ພຣະເຢຊູຄຣິດ; ໂມເຊ *ບຳອິກ*

ງູທອງເຫລືອງທີ່ໂມເຊ ໄດ້ເຮັດຂຶ້ນ ຕາມພຣະບັນຊາຂອງພຣະເຈົ້າ ເພື່ອປິ່ນປົວຊາວອິດສະຣາເອນ ຜູ້ໄດ້ຖືກງູຮ້າຍຕອດ (ງູທີ່ມີພິດ) ໃນຖິ່ນແຫ້ງແລ້ງກັນດານ (ຈບຊ 21:8–9). ງູທອງເຫລືອງດັ່ງກ່າວ ໄດ້ຖືກມັດຕິດໄວ້ເທິງຮາວໄມ້ ແລະ "ຍົກມັນໄວ້ ເພື່ອວ່າຜູ້ໃດກໍຕາມ ທີ່ຫລຽວເບິ່ງມັນ ຈະລອດ" (ແອວ 33:19–22). ພຣະຜູ້ເປັນເຈົ້າໄດ້ປຽບທຽບການຍົກງູຕົວນັ້ນຂຶ້ນ ໃນຖິ່ນແຫ້ງແລ້ງກັນດານ ໃສ່ກັບການທີ່ພຣະອົງເອງໄດ້ຖືກຍົກຂຶ້ນຢູ່ເທິງໄມ້ກາງແຂນ (ໂຢຮັນ 3:14–15). ການເປີດເຜີຍຍຸກສຸດທ້າຍຢືນຢັນເລື່ອງລາວ ກ່ຽວກັບງູຮ້າຍ ແລະ ເຖິງວິທີທີ່ຜູ້ຄົນໄດ້ຮັບການປິ່ນປົວ (1 ນຟ 17:41; 2 ນຟ 25:20; ຮລມ 8:14–15).

**ເງິນ.** *ເບິ່ງ* ຄວາມເປັນຢູ່ທາງໂລກ; ສ່ວນສິບ, ເງິນສ່ວນສິບ; ໃຫ້ທານ, ການໃຫ້ທານ; ຮັ່ງມີ, ຄວາມຮັ່ງມີ *ບຳອິກ*

ຫລຽນ, ເຈ້ຍ, ໃບຮັບຮອງ, ຫລື ບາງສິ່ງທີ່ຜູ້ຄົນໃຊ້ຈ່າຍສຳລັບສິ່ງຂອງ ຫລື ການບໍລິການ. ບາງເທື່ອ ມັນກໍເປັນເຄື່ອງໝາຍເຖິງວັດຖຸນິຍົມ.

ບໍ່ມີສິ່ງໃດທີ່ຈະຊື້ເອົາພວກເຈົ້າໃຫ້ເປັນອິດສະລະ, **ອຊຢ** 52:3.

ອັກຄະສາວົກສິບສອງໄດ້ຖືກບອກວ່າບໍ່ໃຫ້ເອົາຫຍັງໄປນຳ, ບໍ່ໃຫ້ເອົາຖົງ, ອາຫານ, ເງິນໃສ່ກະເປົາຕອນອອກເດີນທາງ, **ມຣກ** 6:8. ເປໂຕໄດ້ບອກຊີໂມນຜູ້ເປັນໝໍເວດມົນຄາຖາວ່າ ເງິນຂອງລາວຈະຈິບຫາຍໄປກັບລາວ, **ກຈກ** 8:20. ການຮັກເງິນຄຳເປັນເຄົ້າມູນຂອງຄວາມຊົ່ວທຸກຢ່າງ, **1 ຕມທ** 6:10.

ຢ່າໄດ້ໃຊ້ເງິນເພື່ອສິ່ງທີ່ບໍ່ມີຄຸນຄ່າ, **2 ນຟ** 9:50–51 (ອຊຢ 55:1–2; 2 ນຟ 26:25–27). ຖ້າຫາກພວກເຂົາເຮັດການເພື່ອເງິນ, ພວກເຂົາຈະຕ້ອງຕາຍ, **2 ນຟ** 26:31. ກ່ອນທີ່ພວກທ່ານຈະຊອກຫາຄວາມຮັ່ງມີນັ້ນ, ພວກທ່ານຄວນຊອກຫາອານາຈັກຂອງພຣະເຈົ້າກ່ອນ, **ຢຄ** 2:18–19. ສາດສະໜາຈັກຕ່າງໆຈະກ່າວວ່າ ດ້ວຍເງິນຂອງທ່ານ ທ່ານຈະໄດ້ຮັບອະໄພຈາກບາບຂອງທ່ານ, **ມມ** 8:32, 37.

ຄົນທີ່ມອບເງິນໃຫ້ສຳລັບອຸດົມການຂອງຊີໂອນ ຈະບໍ່ມີທາງສູນເສຍລາງວັນຂອງເຂົາໄປ, **ຄພ** 84:89–90.

**ເງິນຄຳ.** *ເບິ່ງ* ເງິນ *ບຳອິກ*

ຄຳຂອງພາສາອາຣັບ ໝາຍເຖິງ "ຂອງມີຄ່າ" (ມທ 6:24; ລກ 16:9; ຄພ 82:22).

**ຈັກກະພົບໂຣມ.** *ເບິ່ງ* ກຸງໂຣມ *ບຳອິກ*

ຈັກກະພົບໂຣມໃນສະໄໝບູຮານ. ໃນຍຸກສະໄໝຂອງອັກຄະສາວົກ, ຈັກກະພົບໂຣມເປັນຈັກກະພັດໜຶ່ງທີ່ມີອຳນາດຍິ່ງໃຫຍ່ທີ່ສຸດຢູ່ໃນໂລກ. ຈັກກະພັດນີ້ແມ່ນຮ່ວມດ້ວຍທຸກສິ່ງ ທີ່ຢູ່ໃນເຂດ ເອີຟຣັດ, ດານູບ, ຣາຍ, ແອັດແລນຕິກ, ແລະ ທະເລຊາຍຊາຫາຣາ. ຟີລິດສະຕິນໄດ້ກາຍເປັນປະເທດໜຶ່ງທີ່ຂຶ້ນກັບມັນ 63 ປີ ກ່ອນ ຄ.ສ., ເມື່ອປອມເປຍຶດຄອງເຢຣູຊາເລັມ. ເຖິງແມ່ນວ່າຊາວໂຣມໄດ້ໃຫ້ສິດແກ່ຊາວຢິວ ໃນຫລາຍຢ່າງກໍຕາມ, ແຕ່ຊາວຢິວຍັງກຽດຊັງກົດໝາຍຂອງຊາວໂຣມຢູ່ ແລະຫາວິທີກະບົດຢູ່ຕະຫລອດເວລາ.

ໂປໂລ ຜູ້ເປັນສັນຊາດໂຣມ ໄດ້ໃຊ້ພາສາກຣີກ ຊຶ່ງເປັນພາສາທີ່ມັກໃຊ້ກັນຢູ່ໃນຈັກກະພົບ, ເພື່ອປະກາດພຣະກິດຕິຄຸນຕະຫລອດທົ່ວຈັກກະພົບ.

ສິ່ງທີ່ເປັນຂອງກາຍຊາ ຈົ່ງຄືນໃຫ້ແກ່ກາຍຊາ, **ມທ** 22:17–22. ໂປໂລໄດ້ຂໍຮ້ອງສິດທິຂອງລາວໃນຖານະເປັນສັນຊາດໂຣມ, **ກຈກ** 16:37–39 (ກຈກ 22:25–29).

**ຈິງ, ຄວາມຈິງ.** *ເບິ່ງ* ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ຄວາມຮູ້; ຮູ້

ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ *ບຳອີກ*

ຄວາມຮູ້ກ່ຽວກັບສິ່ງທີ່ມັນເປັນຢູ່, ແລະ ດັ່ງທີ່ມັນເຄີຍເປັນ, ແລະ ສິ່ງທີ່ມັນຈະເປັນ (ຄພ 93:24). ຄວາມຈິງ ຍັງ ຖືກອ້າງ ເຖິງ ວ່າເປັນຄວາມສະຫວ່າງ ແລະ ການເປີດເຜີຍ ຈາກສະຫວັນ.

ຄວາມສັດຊື່ຂອງຄົນ ຈະ ພົ້ງ ຈາກ ແຜ່ນດິນຂຶ້ນໄປ, **ພສສ** 85:11 (ມຊ 7:62).

ພວກເຈົ້າຈະຮູ້ຈັກຄວາມຈິງ ແລະ ຄວາມຈິງນັ້ນຈະເຮັດໃຫ້ພວກເຈົ້າເປັນອິດສະລະ, **ຢຮ** 8:32. ເຮົານີ້ແຫລະເປັນທາງນັ້ນ, ເປັນຄວາມຈິງ, ແລະ ເປັນຊີວິດ, **ຢຮ** 14:6. ຖ້າພວກເຮົາເວົ້າວ່າ ພວກເຮົາບໍ່ມີບາບ ພວກເຮົາກໍຫລອກລວງຕົນເອງ, **1 ຢຮ** 1:8.

ຄົນຜິດຍ່ອມຖືເອົາຄວາມຈິງເປັນເລື່ອງຮຸນແຮງ, **1 ນຟ** 16:2. ຄົນຊອບທຳຮັກຄວາມຈິງ, **2 ນຟ** 9:40. ພຣະວິນຍານກ່າວດ້ວຍຄວາມຈິງ ແລະ ບໍ່ຕົວະ, **ຢຄ** 4:13. ພຣະອົງເປັນພຣະເຈົ້າແຫ່ງຄວາມຈິງ ແລະ ເວົ້າຕົວະບໍ່ໄດ້, **ອທ** 3:12. ໂດຍອຳນາດຂອງພຣະວິນຍານບໍລິສຸດ ທ່ານຈະຮູ້ຈັກຄວາມຈິງຂອງທຸກເລື່ອງ, **ມຣນ** 10:5.

ຄວາມຈິງຈະກຳລັງຢູ່ຕະຫລອດການ ແລະ ຕະຫລອດໄປ, **ຄພ** 1:39. ເຈົ້າໄດ້ຮັບຄວາມສະຫວ່າງໂດຍພຣະວິນຍານແຫ່ງຄວາມຈິງ, **ຄພ** 6:15. ພຣະຄຳພີມໍມອນບັນຈຸຄວາມຈິງ ແລະ ພຣະຄຳຂອງພຣະເຈົ້າ, **ຄພ** 19:26. ພຣະຜູ້ປອບໂຍນໄດ້ຖືກສົ່ງອອກໄປເພື່ອສອນຄວາມຈິງ, **ຄພ** 50:14. ຄົນທີ່ໄດ້ຮັບພຣະຄຳໂດຍພຣະວິນຍານແຫ່ງຄວາມຈິງ ໄດ້ຮັບມັນດັ່ງທີ່ສັ່ງສອນໄວ້ໂດຍພຣະວິນຍານແຫ່ງຄວາມຈິງ, **ຄພ** 50:17–22. ປະກາດຄວາມຈິງອີງຕາມການເປີດເຜີຍ ຊຶ່ງເຮົາໄດ້ມອບໃຫ້ພວກເຈົ້າ, **ຄພ** 75:3–4. ສິ່ງໃດກໍຕາມທີ່ເປັນຄວາມຈິງຄືຄວາມສະຫວ່າງ, **ຄພ** 84:45. ຄວາມສະຫວ່າງຂອງພຣະຄຣິດຄື ຄວາມສະຫວ່າງແຫ່ງຄວາມຈິງ, **ຄພ** 88:6–7, 40. ພຣະວິນຍານຂອງເຮົາຄືຄວາມຈິງ, **ຄພ** 88:66. ຄວາມຮູ້ແຈ້ງ, ຫລື ຄວາມສະຫວ່າງແຫ່ງຄວາມຈິງ, ບໍ່ໄດ້ຖືກສ້າງຂຶ້ນ, **ຄພ** 93:29. ລັດສະໝີພາບຂອງພຣະເຈົ້າເປັນຄວາມຮູ້ແຈ້ງ, ຫລື ເປັນຄວາມສະຫວ່າງ ແລະ ຄວາມຈິງ, **ຄພ** 93:36. ເຮົາໄດ້ບັນຊາພວກເຈົ້າໃຫ້ລ້ຽງດູລູກໆຂອງພວກເຈົ້າໃນຄວາມສະຫວ່າງ ແລະ ຄວາມຈິງ, **ຄພ** 93:40.

ພຣະອົງດຽວທີ່ຖືກກຳເນີດຂອງເຮົາເຕັມໄປດ້ວຍພຣະຄຸນ ແລະ ຄວາມຈິງ, **ມຊ** 1:6.

**ຈິດໃຈ**

ມັນສະໝອງ; ພະລັງຂອງຄວາມຄິດທີ່ຮູ້ສຶກຕົວ.

ຈົ່ງບົວລະບັດຮັບໃຊ້ພຣະອົງດ້ວຍສຸດໃຈ ແລະ ສຸດຄວາມຄິດ, **1 ຂຄ** 28:9.

ຈົ່ງຮັກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າດ້ວຍສຸດຈິດ, **ມທ** 22:37.

ການມີຈິດໃຈທີ່ເຕັມໄປດ້ວຍຕັນຫາຄືຄວາມຕາຍ; ການມີຈິດໃຈທີ່ສະແຫວງຫາສິນທຳຄືຊີວິດນິລັນດອນ, **2 ນຟ** 9:39. ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ເຂົ້າສູ່ຈິດໃຈຂອງຂ້າພະເຈົ້າ, **ອນ** 1:10. ພຣະຄຳໄດ້ໃຫ້ຜົນທີ່ມີອຳນາດແກ່ຈິດໃຈຂອງຜູ້ຄົນຍິ່ງກວ່າດາບ, **ແອວ** 31:5.

ເຮົາຈະບອກເຈົ້າໃນຈິດໃຈຂອງເຈົ້າ, **ຄພ** 8:2. ສຶກສາມັນຢູ່ໃນຈິດໃຈຂອງເຈົ້າກ່ອນ, **ຄພ** 9:8. ໃຫ້ຄວາມນອບນ້ອມແຫ່ງຊົ່ວນິລັນດອນຢູ່ໃນຈິດໃຈຂອງພວກເຈົ້າ, **ຄພ** 43:34. ໃນເວລາທີ່ຜ່ານມາ ຈິດໃຈຂອງພວກເຈົ້າຖືກເຮັດໃຫ້ມືດມົນ, **ຄພ** 84:54. ໃຫ້ເຂົ້ານອນແຕ່ຫົວຄ່ຳ, ໃຫ້ຕື່ນແຕ່ເຊົ້າ, ເພື່ອຮ່າງກາຍ ແລະ ຈິດໃຈຂອງພວກເຈົ້າຈະສົດຊື່ນ, **ຄພ** 88:124.

ຊາຕານບໍ່ຮູ້ຈັກພຣະປະສົງຂອງພຣະເຈົ້າ, **ມຊ** 4:6. ພຣະຜູ້ເປັນເຈົ້າໄດ້ເອີ້ນຜູ້ຄົນຂອງພຣະອົງວ່າ ຊີໂອນ, ເພາະວ່າພວກເຂົາມີໃຈດຽວ ແລະ ມີຄວາມຄິດດຽວ, **ມຊ** 7:18.

**ຈິດວິນຍານ.** *ເບິ່ງ* ວິນຍານ; ຮ່າງກາຍ *ບຳອີກ*

ພຣະຄຳພີກ່າວເຖິງຈິດວິນຍານໃນສາມແບບ: (1) ຮ່າງກາຍທີ່ເປັນວິນຍານ, ກ່ອນມະຕະ ແລະ ຫລັງຈາກມະຕະ (ແອວ 40:11–14; ອຣຣ 3:23); (2) ວິນຍານ ແລະ ຮ່າງກາຍໄດ້ຮວມເຂົ້າກັນໃນ ຄວາມເປັນມະຕະ (ຄພ 88:15; ອຣຣ 5:7); ແລະ (3) ບຸກຄົນທີ່ຟື້ນຄືນຊີວິດ ແລະ ເປັນອະມະຕະ ຊຶ່ງວິນຍານ ແລະ

ຮ່າງກາຍ ຈະບໍ່ແຍກອອກຈາກກັນອີກ (2 ນຟ 9:13; ຄພ 88:15–16).

ເລືອດສາມາດລຶບລ້າງບາບໄດ້ ເພາະມັນແມ່ນຊີວິດ, **ລລວ** 17:11. ພຣະອົງໃຫ້ຂ້ານ້ອຍມີແຮງຂຶ້ນໃໝ່, **ພສສ** 23:1–3.

ຈົ່ງຮັກອົງພຣະຜູ້ເປັນເຈົ້າດ້ວຍສຸດຈິດ, **ມທ** 22:37 (ມຣກ 12:30).

ມານກ່ອມຈິດວິນຍານຂອງພວກເຂົາ, **2 ນຟ** 28:21. ຖວາຍທັງຈິດວິນຍານຂອງພວກທ່ານເປັນເຄື່ອງບູຊາແດ່ພຣະອົງ, **ອມນ** 1:26. ພຣະຄຳເລີ່ມເຮັດໃຫ້ຈິດວິນຍານຂອງເຮົາຂະຫຍາຍອອກ, **ແອວ** 32:28. ຈິດວິນຍານຂອງເຂົາຈະບໍ່ຫິວ ຫລື ກະຫາຍ, **3 ນຟ** 20:8. ເຂົ້າຈີ່ ແລະ ນ້ຳຂອງສິນລະລຶກ ເປັນສິ່ງຊຳລະຈິດວິນຍານຂອງຄົນທີ່ຮັບສ່ວນໃຫ້ບໍລິສຸດ, **ມຣນ** 4–5 (ຄພ 20:77–79).

ຜູ້ທຳງານໃນອານາຈັກ ຈະນຳຄວາມລອດມາໃຫ້ຈິດວິນຍານຂອງພວກເຂົາ ຜ່ານການຮັບໃຊ້ຂອງພວກເຂົາ, **ຄພ** 4:2, 4. ຄຸນຄ່າຂອງຈິດວິນຍານແມ່ນຍິ່ງໃຫຍ່, **ຄພ** 18:10.

ພວກເຈົ້າໄດ້ເກີດໃນໂລກໂດຍນ້ຳ, ໂລຫິດ, ແລະ ວິນຍານ, ຊຶ່ງເຮົາໄດ້ສ້າງ, ແລະ ໄດ້ກາຍເປັນຈິດວິນຍານທີ່ມີຊີວິດ, **ມຊ** 6:59.

*ຄຸນຄ່າຂອງຈິດວິນຍານ:* ທຸກໆຄົນເປັນລູກໆທາງວິນຍານຂອງພຣະເຈົ້າ. ພຣະອົງເປັນຫ່ວງເປັນໃຍນຳລູກໆທຸກຄົນຂອງພຣະອົງ ແລະ ຖືວ່າທຸກຄົນສຳຄັນ. ເພາະເຂົາເປັນລູກໆຂອງພຣະອົງ, ເຂົາຈຶ່ງມີຄວາມສາມາດທີ່ຈະກາຍເປັນເໝືອນດັ່ງພຣະອົງໄດ້. ດັ່ງນັ້ນ, ເຂົາຈຶ່ງມີຄວາມສຳຄັນຢ່າງຫລວງຫລາຍ.

ມີຄວາມຊົມຊື່ນຍິນດີ ທີ່ມີຄົນບາບຜູ້ໜຶ່ງຖິ້ມໃຈເກົ່າເອົາໃຈໃໝ່, **ລກ** 15:10. ພຣະເຈົ້າຮັກໂລກຫລາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວທີ່ຖືກຳເນີດຂອງພຣະອົງ, **ຢຮ** 3:16.

ພວກເຂົາທົນບໍ່ໄດ້ທີ່ຈິດວິນຍານຂອງຜູ້ໜຶ່ງຈະຕ້ອງຕາຍ, **ມຊຢ** 28:3. ຈິດວິນຍານໃນເວລານີ້ບໍ່ແມ່ນບໍທີ່ມີຄ່າຕໍ່ພຣະເຈົ້າດັ່ງຈິດວິນຍານໃນເວລາຂອງການສະເດັດມາຂອງພຣະອົງ, **ແອວ** 39:17.

ສິ່ງທີ່ມີຄຸນຄ່າທີ່ສຸດສຳລັບເຈົ້າແມ່ນການທີ່ຈະນຳຈິດວິນຍານມາຫາເຮົາ, **ຄພ** 15:6. ຈົ່ງຈຳໄວ້ວ່າຄຸນຄ່າຂອງຈິດວິນຍານແມ່ນຍິ່ງໃຫຍ່ໃນສາຍພຣະເນດຂອງພຣະເຈົ້າ, **ຄພ** 18:10–15.

ນີ້ຄືວຽກງານ ແລະ ລັດສະໝີພາບຂອງເຮົາຄືການທີ່ຈະເຮັດໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39.

**ຈິບຫາຍ.** *ເບິ່ງ* ບຸດແຫ່ງຄວາມຈິບຫາຍ

**ເຈັບປ່ວຍ, ພະຍາດໂລຄາ**

ຄືການປ່ວຍໄຂ້ ຫລື ເປັນພະຍາດ. ໃນຂໍ້ພຣະຄຳພີ, ບາງເທື່ອ ການປ່ວຍໄຂ້ທາງຮ່າງກາຍ ເປັນສິ່ງບົ່ງບອກເຖິງຄວາມຂາດຄວາມຢູ່ເຢັນເປັນສຸກທາງວິນຍານ (ອຊຢ 1:4–7; 33:24).

ເຮົາໄດ້ຍິນຄຳອະທິຖານຂອງເຈົ້າ ແລະ ເຫັນນ້ຳຕາຂອງເຈົ້າ. ເຮົາຈະໃຫ້ເຈົ້າຫາຍປ່ວຍ, **2 ກສ** 20:1–5 (2 ຂຄ 32:24; ອຊຢ 38:1–5).

ພຣະເຢຊູໄດ້ເດີນທາງໄປທົ່ວ ເພື່ອປິ່ນປົວຄົນທີ່ເຈັບໄຂ້ໄດ້ປ່ວຍຕ່າງໆ, **ມທ** 4:23–24 (1 ນຟ 11:31; ມຊຢ 3:5–6). ຄົນທີ່ມີສຸຂະພາບດີບໍ່ຕ້ອງການໝໍ, ມີແຕ່ຄົນເຈັບປ່ວຍເທົ່ານັ້ນ, **ມທ** 9:10–13 (ມຣກ 2:14–17; ລກ 5:27–32). ມີຜູ້ໃດເຈັບໄຂ້ໄດ້ປ່ວຍບໍ່? ໃຫ້ເຊີນບັນດາເຖົ້າແກ່ມາ, **ຢກບ** 5:14–15.

ພຣະຄຣິດຈະຮັບເອົາຄວາມເຈັບປວດ ແລະ ຄວາມປ່ວຍໄຂ້ຂອງຜູ້ຄົນຂອງພຣະອົງ, **ແອວ** 7:10–12. ພຣະເຢຊູໄດ້ປິ່ນປົວຄົນເຈັບໄຂ້ໄດ້ປ່ວຍ ໃນບັນດາຊາວນີໄຟ, **3 ນຟ** 26:15.

ຈົ່ງບຳລຸງລ້ຽງຄົນທີ່ເຈັບປ່ວຍດ້ວຍຄວາມອ່ອນໂຍນທຸກຢ່າງ, ດ້ວຍສະໝຸນໄພ ແລະ ອາຫານອ່ອນ, **ຄພ** 42:43 (ແອວ 46:40). ໃນທຸກສິ່ງໃຫ້ຈື່ຈຳຄົນເຈັບປ່ວຍ ແລະ ຄົນທີ່ເປັນທຸກ, **ຄພ** 52:40. ຈົ່ງວາງມືຂອງເຈົ້າໃສ່ເທິງຄົນທີ່ເຈັບປ່ວຍ, ແລະ ພວກເຂົາຈະຫາຍດີ, **ຄພ** 66:9.

**ເຈຣອມ**

ໃນພຣະຄຳພີມໍມອນ, ບຸດຂອງເອໂນດ ແລະ ເຫລັນຂອງລີໄຮ. ລາວໄດ້ຮັກສາບັນທຶກຂອງຊາວນີໄຟ ເປັນເວລາຫົກສິບປີ, 420–361 ປີ

ກ່ອນ ຄ.ສ. (ອນ 1:25; ຈຣ 1:13). ລາວເປັນຊາຍທີ່ຊື່ສັດ ຜູ້ໄດ້ເລືອກທີ່ຈະບໍ່ຂຽນຫຍັງຫລາຍກ່ຽວກັບປະຫວັດສາດ (ຈຣ 1:2).

*ໜັງສືເຈຣອມ:* ມີພຽງສິບຫ້າຂໍ້ຢູ່ໃນໜັງສືນີ້ໃນພຣະຄຳພີມໍມອນ. ເຈຣອມໄດ້ບັນທຶກໄວ້ວ່າ ຊາວນີໄຟສືບຕໍ່ດຳລົງຊີວິດຕາມກົດຂອງໂມເຊ ແລະ ໄດ້ລໍຄອຍຢ່າງກະຕືລືລົ້ນສຳລັບການສະເດັດມາຂອງພຣະຄຣິດ. ເຂົາເຈົ້າໄດ້ຖືກນຳພາໂດຍບັນດາກະສັດຜູ້ມີສັດທາອັນຍິ່ງໃຫຍ່. ເຂົາເຈົ້າໄດ້ຈະເລີນຮຸ່ງເຮືອງຂຶ້ນເມື່ອເຂົາເຈົ້າເຊື່ອຟັງຕໍ່ ສາດສະດາ, ປະໂລຫິດ, ແລະ ຄູສອນຂອງເຂົາເຈົ້າ.

**ຈົດເຊັນບັນຊີ.** *ເບິ່ງ* ເພັນຕາຕຸກ *ນຳອີກ*

ໜັງສືເຫລັ້ມທີສີ່ໃນພຣະຄຳພີເດີມ. ໂມເຊໄດ້ຂຽນພຣະທຳຈົດເຊັນບັນຊີ. ພຣະທຳຈົດເຊັນບັນຊີເລົ່າເລື່ອງການເດີນທາງຂອງຊາວອິດສະຣາເອນ ຈາກພູຊີນາຍໄປຫາທົ່ງພຽງໂມອາບແຫ່ງການາອານ. ບົດຮຽນທີ່ສຳຄັນບົດຮຽນໜຶ່ງທີ່ມັນສອນແມ່ນວ່າ ຜູ້ຄົນຂອງພຣະເຈົ້າຕ້ອງເດີນໄປດ້ວຍສັດທາ, ໄວ້ວາງໃຈໃນຄຳສັນຍາຂອງພຣະອົງ, ຖ້າຫາກພວກເຂົາຢາກມີຄວາມສຳເລັດຜົນຕໍ່ໄປ. ມັນບອກເລື່ອງລາວກ່ຽວກັບພຣະເຈົ້າໄດ້ລົງໂທດຊາວອິດສະຣາເອນສຳລັບການບໍ່ເຊື່ອຟັງຂອງພວກເຂົາ ແລະ ໃຫ້ຂໍ້ມູນກ່ຽວກັບກົດຂອງຊາວອິດສະຣາເອນ. ຊື່ຂອງໜັງສືນີ້ໄດ້ມາຈາກຈຳນວນສຳມະໂນຄົວ (ຈບຊ 1–2; 26).

ບົດທີ 1–10 ບອກເຖິງການຕຽມອອກເດີນທາງຈາກພູຊີນາຍຂອງຊາວອິດສະຣາເອນ. ບົດທີ 11–14 ບັນຍາຍເຖິງການເດີນທາງ, ສົ່ງພວກນັກສືບໄປຫາການາອານ, ແລະ ຊາວອິດສະຣາເອນປະຕິເສດເຂົ້າໄປໃນແຜ່ນດິນແຫ່ງຄຳສັນຍາ. ບົດທີ 15–19 ບັນທຶກກົດຕ່າງໆ ແລະ ເຫດການໃນປະຫວັດສາດ. ບົດທີ 20–36 ເປັນປະຫວັດສາດຂອງຜູ້ຄົນປີສຸດທ້າຍໃນຖິ່ນແຫ້ງແລ້ງກັນດານ.

**ຈົ່ມ.** *ເບິ່ງ* ກະບົດ, ການກະບົດ *ນຳອີກ*

ການເວົ້າພຶມພຳ ແລະ ຈົ່ມຕໍ່ຕ້ານພຣະປະສົງ, ແຜນ, ຫລື ຜູ້ຮັບໃຊ້ຂອງພຣະເຈົ້າ.

ຜູ້ຄົນເວົ້າຈົ່ມໃຫ້ໂມເຊ, **ອພຍ** 15:23–16:3. ພວກຢິວຈຶ່ງພາກັນຈົ່ມໃຫ້ພຣະເຢຊູ, **ຢຮ** 6:41.

ເລມັນກັບເລມູເອນໄດ້ຈົ່ມຫລາຍສິ່ງຫລາຍຢ່າງ, **1 ນຟ** 2:11–12 (1 ນຟ 3:31; 17:17).

ຢ່າຈົ່ມເລີຍກ່ຽວກັບສິ່ງທີ່ເຈົ້າຍັງບໍ່ໄດ້ເຫັນ, **ຄພ** 25:4.

**ໂຈເຊັບ ສະມິດ ຜູ້ລູກ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ

**ຈອງຫອງ, ຄວາມຈອງຫອງ.** *ເບິ່ງ* ຄວາມເປັນຢູ່ທາງໂລກ; ເງິນ; ຖ່ອມຕົນ, ຄວາມຖ່ອມຕົນ; ອວດອົ່ງ, ຄວາມອວດອົ່ງ; ຮັ່ງມີ, ຄວາມຮັ່ງມີ *ນຳອີກ*

ການຂາດຄວາມຖ່ອມຕົວ ຫລື ການສອນຍາກ. ຄວາມຈອງຫອງ ເຮັດໃຫ້ຜູ້ຄົນຕໍ່ຕ້ານກັນ ແລະ ຕໍ່ຕ້ານພຣະເຈົ້າ. ຄົນທີ່ອວດດີຈະຍົກຕົນເອງຂຶ້ນສູງກວ່າຄົນທີ່ຢູ່ອ້ອມຮອບເຂົາ ແລະ ເຮັດຕາມຄວາມປະສົງຂອງຕົນ ແທນທີ່ຈະເຮັດຕາມພຣະປະສົງຂອງພຣະເຈົ້າ. ຄວາມອວດດີ, ຄວາມອິດສາ, ຄວາມຫົວແຂງ, ແລະ ຄວາມຖືຕົວ ກໍເປັນລັກສະນະຂອງຄົນທີ່ອວດດີນຳອີກ.

ຈົ່ງໃຫ້ແນ່ໃຈວ່າ ພວກເຈົ້າບໍ່ລືມໄລພຣະຜູ້ເປັນເຈົ້າ ຢ້ານວ່າພວກເຈົ້າຈະກາຍເປັນຄົນຈອງຫອງພອງຕົນ, **ພບຍ** 8:11–14. ເຮົາຊັງຄວາມຫຍາບຊ້າ ແລະ ການອວດດີ, **ສພສ** 8:13 (ສພສ 6:16–17). ຄວາມຈອງຫອງນຳໄປສູ່ການທຳລາຍ, **ສພສ** 16:18. ໃນມື້ນັ້ນພຣະຜູ້ເປັນເຈົ້າຈະເຮັດໃຫ້ຄົນທີ່ອວດດີ ຖ່ອມຕົວລົງ, **ອຊຢ** 2:11–12 (2 ນຟ 12:11–12). ຄວາມອວດອົ່ງຂອງເຈົ້າໄດ້ລໍ້ລວງເຈົ້າເອງ, **ອບຢ** 1:3. ຄົນທີ່ອວດດີທັງໝົດຈະເປັນຄືກັນກັບເຟືອງເຂົ້າ, **ມລກ** 4:1 (1 ນຟ 22:15; 3 ນຟ 25:1; ຄພ 29:9).

ຜູ້ໃດທີ່ຍົກຕົວຂຶ້ນ ຜູ້ນັ້ນຈະຖືກລົດໃຫ້ນ້ອຍລົງ, **ມທ** 23:12 (ຄພ 101:42). ພຣະເຈົ້າຕໍ່ສູ້ຄົນທີ່ອວດດີ, **1 ປຕ** 5:5.

ອາຄານໃຫຍ່ ແລະ ກວ້າງຂວາງຫລັງນີ້ຄືຄວາມຈອງຫອງຂອງໂລກ, **1 ນຟ** 11:36

(1 ນຟ 12:18). ເມື່ອເຂົາມີການສຶກສາ ເຂົາຄິດວ່າເຂົາສະຫລຽວສະຫລາດ ຄິດວ່າຕົນສະຫລຽວສະຫລາດ, **2 ນຟ** 9:28–29. ພວກທ່ານຈຶ່ງຄິດລະເມີເພີ້ຝັນດ້ວຍຄວາມທະນົງໃຈ, **ຢຄ** 2:13, 16 (ແອວ 4:8–12). ພວກທ່ານຖອດຄວາມທະນົງຕົວອອກແລ້ວບໍ, **ແອວ** 5:28. ຄວາມທະນົງຕົວອັນໃຫຍ່ຫລວງໄດ້ເຂົ້າເຖິງໃຈຂອງຜູ້ຄົນ, **ຮລມ** 3:33–36. ລູກຫລານມະນຸດວ່ອງໄວແທ້ນໍທີ່ຈະໄຝ່ຝັນໃນຄວາມທະນົງຕົວ, **ຮລມ** 12:4–5. ຄວາມທະນົງຕົວຂອງຊົນຊາດນີ້ ປະກົດເປັນຄວາມພິນາດຂອງພວກເຂົາ, **ມຣນ** 8:27.

ຈົ່ງລະວັງຄວາມຈອງຫອງ, ຖ້າບໍ່ດັ່ງນັ້ນພວກເຈົ້າຈະກາຍເປັນເໝືອນດັ່ງຊາວນີໄຟ, **ຄພ** 38:39. ຈົ່ງຢຸດຈາກຄວາມຈອງຫອງ ແລະ ຄວາມບໍ່ເອົາໃຈໃສ່ທັງໝົດຂອງພວກເຈົ້າ, **ຄພ** 88:121.

**ຈອມໂຍທາ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ພຣະນາມໜຶ່ງອີກສຳລັບພຣະເຢຊູຄຣິດ. ພຣະອົງປົກຄອງເຫລົ່າທູດໃນສະຫວັນ ແລະ ແຜ່ນດິນໂລກ ແລະ ນຳພາຄົນຊອບທຳຕ້ານກັບຄວາມຊົ່ວ (ຄພ 29:9; 121:23).

ຈອມໂຍທາຄືພຣະເຈົ້າແຫ່ງຄວາມມີໄຊ, **ພສສ** 24:10.

ພຣະເຈົ້າຂອງອິດສະຣາເອນຄື ຈອມໂຍທາ, **1 ນຟ** 20:2.

ວິນຍານຂອງເຮົາຈະບໍ່ພະຍາຍາມກັບມະນຸດສະເໝີໄປ, ຈອມໂຍທາໄດ້ກ່າວ, **ຄພ** 1:33.

**ເຈີມ, ການເຈີມ.** *ເບິ່ງ* ການປະຕິບັດຕໍ່ຄົນເຈັບປ່ວຍ; ນ້ຳມັນ *ນຳອີກ*

ໃນສະໄໝບູຮານ, ສາດສະດາຂອງພຣະຜູ້ເປັນເຈົ້າໄດ້ເຈີມ ດ້ວຍນ້ຳມັນໃຫ້ແກ່ຜູ້ທີ່ຈະປະຕິບັດໜ້າທີ່ພິເສດ, ດັ່ງເຊັ່ນອາໂຣນ ຫລື ປະໂລຫິດ ຫລື ກະສັດ ຜູ້ຈະປົກຄອງອິດສະຣາເອນ. ໃນສາດສະໜາຈັກທຸກວັນນີ້, ການເຈີມແມ່ນການຢອດນ້ຳມັນທີ່ໄດ້ອຸທິດແລ້ວຢອດໜຶ່ງ ຫລື ສອງຢອດໃສ່ຫົວຂອງບຸກຄົນ ຊຶ່ງເປັນພາກສ່ວນໜຶ່ງຂອງພອນພິເສດ. ສິ່ງນີ້ສາມາດກະທຳໄດ້ພຽງແຕ່ພາຍໃຕ້ສິດອຳນາດ ແລະ ອຳນາດຂອງຖານະປະໂລຫິດແຫ່ງເມນຄີເສເດັກ. ຫລັງຈາກການເຈີມ, ບຸກຄົນທີ່ກະທຳໂດຍສິດອຳນາດຂອງຖານະປະໂລຫິດດຽວກັນນັ້ນ ອາດຜະນຶກການເຈີມ ແລະ ມອບພອນພິເສດໃຫ້ແກ່ຜູ້ທີ່ຖືກເຈີມ.

ເຈີມພວກເຂົາ, ແລະ ຫົດສົງພວກເຂົາ ເພື່ອວ່າພວກເຂົາຈະໄດ້ບົວລະບັດຮັບໃຊ້ເຮົາ, **ອພຍ** 28:41 (ລລວ 8:6–12, 30). ຫົດສົງລາວໃຫ້ປົກຄອງປະຊາຊົນອິດສະຣາເອນຂອງເຮົາ, **1 ຊມອ** 9:16; 10:1.

ພວກແອວເດີຕ້ອງເຈີມ ແລະ ໃຫ້ພອນແກ່ຄົນເຈັບປ່ວຍ, **ຢາໂກໂບ** 5:14–15 (ຄພ 42:44).

**ເຈົ້າບ່າວ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ພຣະເຢຊູຄຣິດມີສັນຍາລັກໃນພຣະຄຳພີວ່າເປັນເຈົ້າບ່າວ. ສາດສະໜາຈັກມີສັນຍາລັກວ່າເປັນເຈົ້າສາວຂອງພຣະອົງ.

ສາວບໍລິສຸດສິບຄົນໄດ້ອອກໄປພົບກັບເຈົ້າບ່າວ, **ມທ** 25:1–13. ເຈົ້າສາວຍ່ອມເປັນຂອງເຈົ້າບ່າວ, **ໂຢຮັນ** 3:27–30. ຄວາມສຸກມີແກ່ຄົນທັງຫລາຍທີ່ໄດ້ຮັບເຊີນມາໃນງານລ້ຽງມຸງຄຸນສົມຣົດຂອງພຣະເມສານ້ອຍ, **ພນມ** 19:5–10.

ຈົ່ງຕຽມພ້ອມສຳລັບການສະເດັດມາຂອງເຈົ້າບ່າວ, **ຄພ** 33:17. ຈົ່ງຕຽມພ້ອມສຳລັບເຈົ້າບ່າວ, **ຄພ** 65:3.

**ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່.** *ເບິ່ງ* ສາວົກເຈັດສິບ; ຝ່າຍປະທານສູງສຸດ; ອະທິການຜູ້ຄວບຄຸມ; ອັກຄະສາວົກ

**ໃຈ.** *ເບິ່ງ* ເກີດໃໝ່, ເກີດຈາກພຣະເຈົ້າ; ຫົວໃຈທີ່ຊອກຊ້ຳ *ນຳອີກ*

ເປັນສັນຍາລັກຂອງຈິດໃຈ ແລະ ຄວາມປາດຖະໜາຂອງມະນຸດ ແລະ ເປັນແຫລ່ງທີ່ໃຊ້ປຽບທຽບອາລົມ ແລະ ຄວາມຮູ້ສຶກທັງໝົດ.

ຈົ່ງຮັກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າດ້ວຍສຸດຫົວໃຈຂອງເຈົ້າ, **ພບຍ** 6:5 (ພບຍ 6:3–7; ມທ 22:37; ລກ 10:27; ຄພ 59:5).

ພຣະຜູ້ເປັນເຈົ້າຈະຊອກຫາຊາຍຄົນໜຶ່ງຕາມທີ່ພຣະອົງປະສົງ, **1 ຊມອ** 13:14. ມະນຸດເບິ່ງພາຍນອກ ແຕ່ເຮົາເບິ່ງພາຍໃນຈິດໃຈ, **1 ຊມອ** 16:7. ຜູ້ທີ່ບໍລິສຸດໃນຄວາມຄິດ ແລະ ການກະທຳ ຈະຂຶ້ນໄປທີ່ເນີນພູຂອງພຣະຜູ້ເປັນເຈົ້າ ແລະ ຈະໄດ້ຮັບພອນ, **ພສສ** 24:3–5 (2 ນຟ 25:16). ລາວຄິດແບບໃດ ລາວກໍເປັນຄົນແບບນັ້ນ, **ສພສ** 23:7. ເອລີຢາຈະນຳພໍ່ກັບລູກມາພົບກັນອີກ, **ມລກ** 4:5–6 (ລກ 1:17; ຄພ 2:2; 110:14–15; 138:47; ຈສ—ປ 1:38–39).

ຜູ້ທີ່ມີໃຈບໍລິສຸດກໍເປັນສຸກ, **ມທ** 5:8 (3 ນຟ 12:8). ຄົນຊົ່ວຍ່ອມເອົາສິ່ງຊົ່ວອອກມາຈາກຄັງຊົ່ວແຫ່ງໃຈຂອງຕົນ, **ລກ** 6:45.

ຈົ່ງຕາມພຣະບຸດດ້ວຍຄວາມມຸ້ງໝາຍເຕັມທີ່ແຫ່ງໃຈ, **2 ນຟ** 31:13. ພວກທ່ານໄດ້ເກີດຈາກພຣະເຈົ້າທາງວິນຍານແລ້ວບໍ ແລະ ເຄີຍປະສົບການປ່ຽນແປງອັນຍິ່ງໃຫຍ່ນີ້ໃນໃຈຂອງພວກທ່ານແລ້ວບໍ, **ແອວ** 5:14. ໃຫ້ຖວາຍໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດແດ່ພຣະຜູ້ເປັນເຈົ້າ, **3 ນຟ** 9:20 (3 ນຟ 12:19; ອທ 4:15; ມຣນ 6:2).

ເຮົາຈະບອກເຈົ້າໃນຈິດໃຈ ແລະ ໃນຫົວໃຈຂອງເຈົ້າ ໂດຍພຣະວິນຍານບໍລິສຸດ, **ຄພ** 8:2.

**ໃຈບຸນ, ຄວາມໃຈບຸນ.** *ເບິ່ງ* ຄວາມຜາສຸກ; ເມດຕາສົງສານ, ຄວາມເມດຕາສົງສານ; ຮັກ, ຄວາມຮັກ; ຮັບໃຊ້, ການຮັບໃຊ້ *ນຳອີກ*

ຄວາມຮັກອັນບໍລິສຸດຂອງພຣະຄຣິດ (ມຣນ 7:47); ຄວາມຮັກທີ່ພຣະຄຣິດມີຕໍ່ລູກຫລານມະນຸດ ແລະ ວ່າລູກຫລານມະນຸດຄວນມີຕໍ່ກັນແລະກັນ (2 ນຟ 26:30; 33:7–9; ອທ 12:33–34); ຄວາມຮັກທີ່ສູງສຸດ, ມີກຽດສູງສຸດ, ເຂັ້ມແຂງທີ່ສຸດ, ບໍ່ແມ່ນພຽງແຕ່ຄວາມຮັກແພງເທົ່ານັ້ນ.

ຄວາມຮູ້ເຮັດໃຫ້ອວດອົ່ງ, ແຕ່ຄວາມຮັກເຮັດໃຫ້ຈະເລີນຂຶ້ນ, **1 ກຣທ** 8:1. ຄວາມໃຈບຸນ, ຄວາມຮັກອັນບໍລິສຸດ, ແມ່ນເກີນກວ່າ ແລະ ຍິ່ງໃຫຍ່ກວ່າທຸກສິ່ງທັງປວງ, **1 ກຣທ** 13. ຈຸດປະສົງຂອງຄຳສັ່ງນີ້ແມ່ນເພື່ອກໍ່ໃຫ້ເກີດຄວາມຮັກຈາກໃຈບໍລິສຸດ, **1 ຕມທ** 1:5. ເອົາຄວາມຮັກພີ່ນ້ອງເພີ່ມຄວາມເຫລື້ອມໃສ, **2 ເປໂຕ** 1:7.

ພຣະຜູ້ເປັນເຈົ້າໄດ້ບັນຊາວ່າ ມະນຸດທັງປວງຄວນມີຄວາມໃຈບຸນ, **2 ນຟ** 26:30 (ມຣນ 7:44–47). ໃຫ້ເບິ່ງວ່າພວກທ່ານມີສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ, **ແອວ** 7:24. ຄວາມຮັກທີ່ພຣະຜູ້ເປັນເຈົ້າມີຕໍ່ມະນຸດເປັນຄວາມໃຈບຸນ, **ອທ** 12:33–34. ຖ້າຫາກມະນຸດບໍ່ມີຄວາມໃຈບຸນແລ້ວ ເຂົາຈະຮັບບ່ອນຊຶ່ງຕຽມໄວ້ໃນຜາສາດຂອງພຣະບິດາບໍ່ໄດ້, **ອທ** 12:34 (ມຣນ 10:20–21). ໂມໂຣໄນໄດ້ຂຽນຖ້ອຍຄຳຂອງມໍມອນໄວ້ກ່ຽວກັບສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ, **ມຣນ** 7.

ຄວາມໃຈບຸນເຮັດໃຫ້ມະນຸດເໝາະສົມສຳລັບວຽກງານຂອງພຣະເຈົ້າ, **ຄພ** 4:5–6 (ຄພ 12:8). ຈົ່ງຫຸ້ມຫໍ່ຕົນເອງດ້ວຍພັນທະແຫ່ງຄວາມໃຈບຸນ, **ຄພ** 88:125. ໃຫ້ອຸທອນຂອງທ່ານເຕັມປ່ຽມໄປດ້ວຍຄວາມໃຈບຸນ, **ຄພ** 121:45.

**ສະຕິປັນຍາ.** *ເບິ່ງ* ເຂົ້າໃຈ, ຄວາມເຂົ້າໃຈ; ຄວາມຮູ້; ຈິງ, ຄວາມຈິງ *ນຳອີກ*

ຄວາມສາມາດ ຫລື ຂອງປະທານຈາກພຣະເຈົ້າ ທີ່ຈະຕັດສິນຢ່າງຖືກຕ້ອງ. ບຸກຄົນທີ່ໄດ້ຮັບປັນຍາ ຜ່ານປະສົບການ ແລະ ການສຶກສາ ແລະ ໂດຍເຮັດຕາມຄຳແນະນຳຂອງພຣະເຈົ້າ. ປາດສະຈາກຄວາມຊ່ວຍເຫລືອຂອງພຣະເຈົ້າ, ມະນຸດຈະບໍ່ມີປັນຍາທີ່ແທ້ຈິງ (2 ນຟ 9:28; 27:26).

ພຣະເຈົ້າໄດ້ປະທານສະຕິປັນຍາໃຫ້ແກ່ໂຊໂລໂມນ, **1 ກສ** 4:29–30. ປັນຍາແມ່ນສິ່ງສຳຄັນອັນສຸດຍອດ: ສະນັ້ນ ຈົ່ງຫາເອົາປັນຍາໃຫ້ໄດ້, **ສພສ** 4:7. ຄິດເຖິງຕົນຈຶ່ງຫົນຮຽນເອົາທຸກສິ່ງ, **ສພສ** 19:8.

ພຣະເຢຊູໄດ້ເຕັມໄປດ້ວຍສະຕິປັນຍາ, **ລກ** 2:40, 52. ຖ້າຄົນໃດໃນພວກເຈົ້າຂາດສະຕິປັນຍາ, ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າ, **ຢກບ** 1:5 (ຄພ 42:68; ຈສ—ປ 1:11).

ຂ້າພະເຈົ້າບອກພວກທ່ານເຖິງເລື່ອງເຫລົ່າ

ນີ້ ເພື່ອ ພວກ ທ່ານ ຈະ ຮຽນ ຮູ້ ກ່ຽວ ກັບ ປັນ ຍາ, **ມຊຢ** 2:17. ຈົ່ງຮຽນຮູ້ປັນຍາໃນໄວໜຸ່ມຂອງລູກ, **ແອວ** 37:35.

ໄພ່ ພົນ ຂອງພຣະ ເຈົ້າ ຈະ ພົບ ສະ ຕິປັນ ຍາ ແລະ ຂຸມຊັບແຫ່ງຄວາມຮູ້, **ຄພ** 89:19. ໃຫ້ຄົນທີ່ໂງ່ຈ້າຮຽນຮູ້ປັນຍາໂດຍການຖ່ອມຕົວ ແລະ ເອີ້ນຫາພຣະຜູ້ເປັນເຈົ້າ, **ຄພ** 136:32.

**ສະເຕກ**

ໜ່ວຍງານການຈັດຕັ້ງ ແລະ ໜ່ວຍງານບໍລິຫານຢ່າງໜຶ່ງ ຂອງສາດສະໜາຈັກຂອງພຣະເຢຊູຄຣິດ ແຫ່ງ ໄພ່ພົນຍຸກສຸດທ້າຍ. ສະເຕກປະກອບດ້ວຍຫວອດ ຫລື ສາຂາຫລາຍແຫ່ງ. ໂດຍທົ່ວ ໄປ ແລ້ວ ມັນຈະ ມີເຂດ ແດນ ແລະ ເຮັດເປັນຄືພາບຜ້າເຕັ້ນ ທີ່ຖືກບັນຍາຍໄວ້ໃນເອຊາຢາ 54:2: ທີ່ວ່າ “ຈົ່ງຕໍ່ ເຊືອກຜ້າເຕັ້ນຂອງເຈົ້າໃຫ້ຍາວ; ແລະ ສຽບຫລັກຂອງເຈົ້າໃຫ້ແໜ້ນ.” ແຕ່ລະສະເຕກຂອງຊີໂອນ ຈະຄ້ຳຊູ ແລະ ຊ່ວຍເຫລືອສາດສະໜາຈັກ ໃນວິທີທີ່ຜ້າເຕັ້ນ ຫລື ສະຖານທີ່ນະມັດສະການ ຖືກຄ້ຳຊູໄວ້ດ້ວຍຫລັກ. ສະເຕກເປັນສະຖານທີ່ເຕົ້າໂຮມສຳລັບຜູ້ທີ່ເຫລືອຢູ່ຂອງອິດສະຣາເອນທີ່ກະຈັດກະຈາຍໄປ (ຄພ 82:13–14; 101:17–21).

ຈົ່ງ ເຮັດ ໃຫ້ ຫລັກ ຂອງ ທ່ານ ແຂງ ແຮງ ແລະ ຂະຫຍາຍເຂດຂອງທ່ານ, **ມຣນ** 10:31 (ຄພ 82:14).

ກຳ ນົດ ສະເຕກອື່ນໆ ໄວ້ ໃຫ້ຊີໂອນທີ່ນອກເໜືອ ໄປ ຈາກ ສະເຕກແຫ່ງນີ້, **ຄພ** 109:59. ການ ເຕົ້າ ໂຮມ ຢູ່ ເທິງ ແຜ່ນດິນ ຊີ ໂອນ, ແລະ ເທິງສະເຕກຂອງນາງ, ຈະເກີດຂຶ້ນເພື່ອການປົກປ້ອງ, **ຄພ** 115:6 (ຄພ 101:21). ບ່ອນອື່ນຄວນຖືກກຳນົດໃຫ້ເປັນສະເຕກ, **ຄພ** 115:18. ປະທານກຸ່ມມະຫາປະ ໂລຫິດ ໄດ້ຖືກຕັ້ງຂຶ້ນເພື່ອຈຸດປະສົງຂອງການເບິ່ງຄວາມເໝາະສົມຂອງຄົນ ເຫລົ່ານັ້ນ ຜູ້ ຈະ ຖືກ ກຳ ນົດ ໃຫ້ ເປັນປະທານ ສະເຕກ, **ຄພ** 124:133–134. ຈົ່ງອອກໄປຍັງແຜ່ນດິນຊີໂອນ, ເພື່ອວ່າສະເຕກຂອງນາງຈະຖືກເຮັດໃຫ້ເຂັ້ມແຂງຂຶ້ນ, **ຄພ** 133:9.

**ສະຖານທີ່ນະມັດສະການ.** *ເບິ່ງ* ສັກສິດທີ່ສຸດ; ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ; ຫີບຄຳໝັ້ນສັນຍາ *ບຳອິກ*

ບ້ານຂອງພຣະຜູ້ເປັນເຈົ້າ, ສູນກາງນະມັດສະການ ຂອງ ອິດສະຣາເອນ ໃນລະຫວ່າງການອົບພະຍົບໜີຈາກເອຢິບ. ແທ້ຈິງແລ້ວ ສະຖານ ທີ່ນະມັດ ສະການ ອາດ ເປັນພຣະວິຫານ ທີ່ຍົກຍ້າຍ ໄປ ນຳໄດ້ ແລະ ສາມາດແຍກອອກເປັນສ່ວນໆ ແລະ ປະກອບເຂົ້າກັນໄດ້. ລູກຫລານຂອງອິດສະຣາເອນໄດ້ໃຊ້ສະຖານທີ່ນະມັດສະການ ຈົນກວ່າພວກເຂົາໄດ້ສ້າງ ພຣະ ວິຫານ ຂອງ ໂຊ ໂລ ໂມນ (ຄພ 124:38).

ພຣະ ເຈົ້າໄດ້ເປີດເຜີຍແບບແຜນຂອງສະຖານ ທີ່ນະມັດສະການແກ່ໂມເຊ (ອພຍ 26–27), ແລະ ລູກຫລານຂອງອິດສະຣາເອນໄດ້ສ້າງມັນ ຕາມແບບແຜນນັ້ນ (ອພຍ 35–40). ເມື່ອ ສະຖານທີ່ນະມັດ ສະການ ສຳເລັດ ຮຽບຮ້ອຍ, ເມກ ໄດ້ມາປົກຄຸມຜ້າເຕັ້ນ ໄວ້, ແລະ ລັດສະໝີພາບຂອງພຣະຜູ້ເປັນເຈົ້າ ໄດ້ເຕັມຢູ່ໃນສະຖານທີ່ນະມັດສະການ (ອພຍ 40:33–34). ເມກໄດ້ເປັນເຄື່ອງໝາຍຂອງການປະທັບຢູ່ຂອງພຣະເຈົ້າ. ໃນຍາມກາງຄືນ, ມີແສງເປັນໄຟພຸ່ງຂຶ້ນເທິງຫໍເຕັ້ນສັກສິດ. ເມື່ອເມກປົກຄຸມຢູ່ເທິງຫໍເຕັ້ນ, ລູກຫລານຂອງອິດສະຣາເອນຈະຕັ້ງຄ້າຍພັກ. ເມື່ອ ເມກ ໄດ້ຍ້າຍ ໄປຈາກຫໍເຕັ້ນ, ພວກເຂົາກໍໄດ້ເຄື່ອນຍ້າຍຄ້າຍພັກ (ອພຍ 40:36–38; ຈບຊ 9:17–18). ລູກຫລານຂອງອິດສະຣາເອນໄດ້ຫາມສະຖານທີ່ນະມັດສະການໄປນຳ ໃນໄລຍະທີ່ຊັດເຊພະເນຈອນໄປໃນຖິ່ນແຫ້ງແລ້ງກັນດານ ແລະ ໃນຕອນທີ່ພວກເຂົາໄດ້ເຂົ້າຍຶດຄອງແຜ່ນດິນການາອານ. ຫລັງຈາກການຍຶດຄອງນັ້ນ, ສະຖານທີ່ນະມັດສະການ ໄດ້ຖືກຕັ້ງຂຶ້ນທີ່ ຊີໂລ, ບ່ອນທີ່ພຣະຜູ້ເປັນເຈົ້າໄດ້ເລືອກໄວ້ (ຢຊ 18:1). ຫລັງຈາກລູກຫລານຂອງອິດສະຣາເອນໄດ້ສ້າງພຣະວິຫານຂອງໂຊໂລໂມນແລ້ວ, ສະຖານທີ່ນະມັດສະການທັງໝົດກໍໄດ້ສາບສູນໄປຈາກປະຫວັດສາດ.

ພຣະຜູ້ເປັນເຈົ້າ ແລະ ເອຊາຢາ ໄດ້ໃຊ້ສະ

ຖານ ທີ່ ນະມັດ ສະການ ເປັນ ສັນ ຍາ ລັກ ຂອງ ເມືອງຊີໂອນ ແລະ ເຢຣູຊາເລັມ ໃນເວລາຂອງ ການສະ ເດັດມາຄັ້ງທີສອງຂອງພຣະຜູ້ເປັນ ເຈົ້າ (ອຊຢ 33:20; ມຊ 7:62).

**ສະພາສູງ**

ສະພາຂອງມະຫາປະໂລຫິດສິບສອງຄົນ

ໃນຕອນຕົ້ນຂອງການ ຟື້ນ ຟູສາດສະໜາ ຈັກ, ຄຳວ່າ ສະພາສູງ ແມ່ນໝາຍເຖິງໜ່ວຍ ປົກຄອງສອງກຸ່ມ: (1) ກຸ່ມອັກຄະສາວົກສິບ ສອງຂອງສາດສະໜາຈັກ (ຄພ 107:33, 38); ແລະ (2) ສະພາສູງທີ່ຮັບໃຊ້ພາຍໃນແຕ່ລະ ສະເຕກ (ຄພ 102; 107:36).

**ສະພາວະທີສອງ.** *ເບິ່ງ* ມະຕະ, ຄວາມເປັນ ມະຕະ

**ສະພາອັກຄະສາວົກສິບສອງ.** *ເບິ່ງ* ອັກຄະ ສາວົກ

**ສະມິດ, ໂຈເຊັບ, ຜູ້ພໍ່.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ສະມິດ, ລູສີ ແມັກ *ບຳອີກ*

ພໍ່ ຂອງ ສາດ ສະ ດາ ໂຈເຊັບ ສະມິດ. ເພິ່ນ ເກີດໃນວັນທີ 12 ເດືອນກໍລະກົດ, 1771. ເພິ່ນ ໄດ້ ແຕ່ງ ງານກັບ ນາງລູສີ ແມັກ, ແລະ ພວກ ເພິ່ນມີລູກເກົ້າຄົນ (ຈສ—ປ 1:4). ໂຈເຊັບໄດ້ ກາຍ ເປັນຜູ້ ເຊື່ອທີ່ຊື່ສັດຕໍ່ການເປີດເຜີຍຍຸກ ສຸດທ້າຍ ແລະ ໄດ້ ເປັນປິຕຸຄົນທຳອິດຂອງ ສາດສະໜາຈັກ. ເພິ່ນໄດ້ເສຍຊີວິດໃນວັນທີ 14 ເດືອນກັນຍາ, 1840.

ພຣະ ເຈົ້າ ໄດ້ ເປີດເຜີຍຄຳແນະນຳແກ່ເພິ່ນ ຜ່ານໂຈເຊັບ ລູກຊາຍຂອງເພິ່ນ, **ຄພ** 4; 23:5. ໃຫ້ຜູ້ຮັບ ໃຊ້ທີ່ອາວຸ ໂສຂອງເຮົາ ສືບຕໍ່ຢູ່ກັບ ຄອບຄົວ ຂອງລາວ, **ຄພ** 90:20. ຜູ້ຮັບໃຊ້ຜູ້ ອາວຸ ໂສຂອງ ເຮົາ ໂຈເຊັບ ຜູ້ທີ່ນັ່ງຢູ່ກັບອັບ ຣາຮາມ ທາງຂວາມືຂອງລາວ, **ຄພ** 124:19. ໂຈເຊັບ ສະມິດ, ຜູ້ລູກ, ໄດ້ເຫັນພໍ່ຂອງເພິ່ນ ໃນ ພາບນິມິດ ຢູ່ໃນອານາຈັກຊັ້ນສູງ, **ຄພ** 137:5.

ທູດອົງໜຶ່ງໄດ້ບັນຊາໂຈເຊັບ ສະມິດ ຜູ້ລູກ ໃຫ້ບອກພໍ່ຂອງເພິ່ນ ກ່ຽວກັບພາບທີ່ເພິ່ນໄດ້ ເຫັນ, **ຈສ—ປ** 1:49–50.

**ສະມິດ, ໂຈເຊັບ, ຜູ້ລູກ.** *ເບິ່ງ* ການຟື້ນຟູພຣະ ກິດຕິຄຸນ; ການແປຂອງໂຈເຊັບ ສະມິດ (ປຈສ); ໄຂ່ມຸກອັນລ້ຳຄ່າ; ຄຳສອນ ແລະ ພັນທະສັນຍາ; ພຣະຄຳພີມໍມອນ; ພາບທີ່ ມາໃຫ້ເຫັນຄັ້ງທຳອິດ *ບຳອີກ*

ສາດສະດາທີ່ຖືກເລືອກໃຫ້ຟື້ນຟູສາດສະ ໜາຈັກທີ່ແທ້ຈິງຂອງພຣະເຢຊູຄຣິດຄືນມາສູ່ ແຜ່ນດິນໂລກ. ໂຈເຊັບ ສະມິດ ໄດ້ເກີດໃນລັດ ເວີໝ້ອນ ໃນສະຫະລັດອາເມຣິກາ ແລະ ໄດ້ມີ ຊີວິດຈາກປີ 1805 ເຖິງ 1844.

ໃນປີ 1820, ພຣະເຈົ້າອົງເປັນພຣະບິດາ ແລະ ພຣະເຢຊູຄຣິດ ໄດ້ປະກົດຕໍ່ໂຈເຊັບ, ແລະ ເພິ່ນໄດ້ຮຽນຮູ້ວ່າ ບໍ່ມີສາດສະໜາຈັກ ແຫ່ງໃດຢູ່ໃນແຜ່ນດິນໂລກ ທີ່ແທ້ຈິງ (ຈສ—ປ 1:1–20). ຕໍ່ມາ ທູດໂມໂຣໄນ ໄດ້ມາຢ້ຽມຢາມ ເພິ່ນ, ຜູ້ໄດ້ເປີດເຜີຍບ່ອນທີ່ແຜ່ນຈາລຶກຄຳ ທີ່ ບັນຈຸບັນທຶກຂອງຜູ້ຄົນໃນສະໄໝບູຮານ ທີ່ໄດ້ ອາໄສຢູ່ໃນທະວີບອາເມຣິກາ (ຈສ—ປ 1:29–54).

ໂຈເຊັບໄດ້ແປ ແຜ່ນ ຈາລຶກຄຳ ແລະ ໃນ ປີ 1830 ໄດ້ຈັດພິມມັນເປັນພຣະຄຳພີມໍມອນ (ຈສ—ປ 1:66–67, 75). ໃນປີ 1829, ເພິ່ນ ໄດ້ ຮັບ ສິດອຳນາດຖານະປະ ໂລ ຫິດ ຈາກ ໂຢຮັນບັບຕິສະໂຕ ແລະ ຈາກ ເປໂຕ, ຢາໂກ ໂບ, ແລະ ໂຢຮັນ (ຄພ 13; 27:12; 128:20; ຈສ—ປ 1:68–70).

ຕາມທີ່ໄດ້ຮັບການຊີ້ນຳຈາກພຣະເຈົ້າ, ໃນ ວັນທີ 6 ເດືອນເມສາ, 1830, ໂຈເຊັບ ແລະ ຄົນອື່ນໆຫລາຍຄົນ ໄດ້ຟື້ນຟູສາດສະໜາຈັກ ຂອງພຣະເຢຊູຄຣິດຄືນມາໃໝ່ (ຄພ 20:1–4). ພາຍໃຕ້ການນຳພາຂອງໂຈເຊັບ, ສາດສະໜາ ຈັກຈຶ່ງໄດ້ເຕີບໂຕຂຶ້ນໃນປະເທດການາດາ, ປະເທດອັງກິດ, ແລະ ພາກສ່ວນໜຶ່ງໃນພາກ ຕາເວັນອອກຂອງສະຫະລັດອາເມຣິກາ, ໂດຍ ສະເພາະໃນລັດໂອໄຮໂອ, ລັດມີເຊີຣີ, ແລະ ລັດອີລີນອຍ. ການຂົ່ມເຫັງທີ່ຮ້າຍແຮງໄດ້ຕິດ ຕາມໂຈເຊັບ ແລະ ໄພ່ພົນຂອງພຣະເຈົ້າ ບໍ່ວ່າ ເຂົາເຈົ້າຈະໄປຕັ້ງຖິ່ນຖານຢູ່ບ່ອນໃດກໍຕາມ. ໃນວັນທີ 27 ເດືອນມິຖຸນາ, 1844, ໂຈເຊັບ ແລະ ໄຮຣຳ ອ້າຍຂອງເພິ່ນ ໄດ້ຖືກຂ້າຍ້ອນ

ຄວາມເຊື່ອ ໃນເມືອງຄາດເທດ, ລັດອີລີນອຍ, ໃນສະຫະລັດອາເມຣິກາ.

ໂຢເຊັບ, ລູກຊາຍຂອງຢາໂຄບ, ໄດ້ທຳນາຍກ່ຽວກັບໂຈເຊັບ ສະມິດ, **2 ນຟ** 3:6–15.

ໂດຍທີ່ຮູ້ເຖິງຄວາມເສຍຫາຍທີ່ຈະມາເຖິງ, ພຣະຜູ້ເປັນເຈົ້າຈຶ່ງໄດ້ເອີ້ນຜູ້ຮັບໃຊ້ຂອງພຣະອົງ ໂຈເຊັບ ສະມິດ, **ຄພ** 1:17 (ຄພ 19:13). ໂຈເຊັບ ສະມິດ ໄດ້ຖືກແຕ່ງຕັ້ງເປັນອັກຄະສາວົກຂອງພຣະເຢຊູຄຣິດ ແລະ ເປັນແອວເດີຄົນທຳອິດຂອງສາດສະໜາຈັກນີ້, **ຄພ** 20:2. ໂຈເຊັບໄດ້ຖືກແຕ່ງຕັ້ງເປັນອັກຄະສາວົກໂດຍເປໂຕ, ຢາໂກໂບ, ແລະ ໂຢຮັນ, **ຄພ** 27:12. ໂຈເຊັບ ແລະ ຊິດນີ ຣິກດອນ ໄດ້ເປັນພະຍານວ່າ ພວກເພິ່ນໄດ້ເຫັນພຣະອົງດຽວທີ່ຖືກກຳເນີດຈາກພຣະບິດາ, **ຄພ** 76:23. ພ້ອມດ້ວຍອໍລີເວີ ຄາວເດີຣີ, ໂຈເຊັບ ສະມິດ ໄດ້ເຫັນພຣະຜູ້ເປັນເຈົ້າໃນພາບນິມິດ, **ຄພ** 110:1–4. ພຣະຜູ້ເປັນເຈົ້າໄດ້ເອີ້ນໂຈເຊັບໃຫ້ເປັນແອວເດີຄວບຄຸມ, ເປັນຜູ້ແປ, ຜູ້ເປີດເຜີຍ, ຜູ້ພະຍາກອນ, ແລະ ສາດສະດາ, **ຄພ** 124:125. ໂຈເຊັບ ສະມິດ ໄດ້ເຮັດເພື່ອຄວາມລອດຂອງມະນຸດໃນໂລກນີ້ຫລາຍກວ່າຄົນອື່ນ, ຍົກເວັ້ນແຕ່ພຣະເຢຊູເທົ່ານັ້ນ, **ຄພ** 135:3.

*ພຣະຄຳພີທີ່ໄດ້ນຳອອກມາໂດຍສາດສະດາໂຈເຊັບ ສະມິດ:* ໂຈເຊັບໄດ້ແປພາກສ່ວນໜຶ່ງຂອງແຜ່ນຈາລຶກຄຳ ທີ່ທູດໂມໂຣໄນໄດ້ມອບໃຫ້ເພິ່ນ, ຊຶ່ງການແປນັ້ນ ໄດ້ຖືກຈັດພິມ ໃນປີ 1830 ເປັນພຣະຄຳພີມໍມອນ. ເພິ່ນຍັງໄດ້ຮັບການເປີດເຜີຍຫລາຍຢ່າງຈາກພຣະຜູ້ເປັນເຈົ້ານຳອີກ ໃຫ້ເຄົ້າໂຄງກ່ຽວກັບຄຳສອນຂັ້ນພື້ນຖານ ແລະ ອົງການຂອງສາດສະໜາຈັກ. ການເປີດເຜີຍຫລາຍຢ່າງເຫລົ່ານີ້ ໄດ້ຖືກຮວບຮວມໄວ້ໃນໜັງສືທີ່ເອີ້ນວ່າ ຄຳສອນ ແລະ ພັນທະສັນຍາ. ເພິ່ນເປັນຜູ້ຮັບຜິດຊອບຕໍ່ການນຳໜັງສືໄຂ່ມຸກອັນລ້ຳຄ່າອອກມາ, ຊຶ່ງບັນຈຸການແປທີ່ດົນໃຈຂອງການຂຽນບາງຢ່າງຂອງໂມເຊ, ອັບຣາຮາມ, ແລະ ມັດທາຍ, ຄັດເລືອກເອົາມາຈາກປະຫວັດ ແລະ ປະຈັກພະຍານສ່ວນຕົວຂອງເພິ່ນ, ແລະ ຂໍ້ຄວາມສິບສາມຂໍ້ເລື່ອງຄຳສອນແລະ ຄວາມເຊື່ອຖື ທີ່ສາດສະໜາຈັກຍຶດໝັ້ນ.

**ສະມິດ, ໂຈເຊັບ ແອັຟ**

ປະທານຄົນທີຫົກຂອງສາດສະໜາຈັກ; ເປັນລູກຊາຍຄົນດຽວຂອງໄຮຣຳ ແລະ ນາງແມຣີ ຟຽວດີງ ສະມິດ. ເພິ່ນໄດ້ເກີດໃນວັນທີ 13 ເດືອນພະຈິກ ປີ 1838 ແລະ ໄດ້ເສຍຊີວິດໃນວັນທີ 19 ເດືອນພະຈິກ ປີ 1918.

ໂຈເຊັບ ແອັຟ ສະມິດ ໄດ້ຮັບພາບນິມິດເລື່ອງການໄຖ່ຄົນຕາຍ, **ຄພ** 138.

**ສະມິດ, ຊາມູເອນ ເອັຈ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ນ້ອງຊາຍຂອງສາດສະດາໂຈເຊັບ ສະມິດ (ຈສ—ປ 1:4). ຊາມູເອນໄດ້ເກີດໃນປີ 1808 ແລະ ໄດ້ເສຍຊີວິດ ໃນປີ 1844. ເພິ່ນເປັນພະຍານຄົນໜຶ່ງ ໃນພະຍານແປດຄົນຂອງພຣະຄຳພີມໍມອນ ແລະ ໄດ້ຮັບໃຊ້ເປັນຜູ້ສອນສາດສະໜາຄົນທຳອິດໃຫ້ສາດສະໜາຈັກທີ່ຖືກຟື້ນຟູຄືນມາໃໝ່ (ຄພ 23:4; 52:30; 61:33–35; 66:7–8; 75:13).

**ສະມິດ, ລູສີ ແມັກ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ພໍ່; ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ແມ່ຂອງສາດສະດາໂຈເຊັບ ສະມິດ ແລະ ພັນລະຍາຂອງໂຈເຊັບ ສະມິດ, ຜູ້ພໍ່ (ຈສ—ປ 1:4, 7, 20). ນາງໄດ້ເກີດໃນວັນທີ 8 ເດືອນກໍລະກົດ, 1776 ແລະ ໄດ້ເສຍຊີວິດໃນວັນທີ 5 ເດືອນພຶດສະພາ, 1856.

ໂຈເຊັບໄດ້ເຫັນແມ່ຂອງເພິ່ນ ໃນພາບນິມິດຢູ່ໃນອານາຈັກຊັ້ນສູງ, **ຄພ** 137:5.

**ສະມິດ, ເອມມາ ເຮວ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ພັນລະຍາຂອງສາດສະດາໂຈເຊັບ ສະມິດ. ພຣະຜູ້ເປັນເຈົ້າໄດ້ບັນຊານາງເອມມາ ໃຫ້ເລືອກເພງສວດໃຫ້ ສຳລັບສາດສະໜາຈັກ. ນາງຍັງໄດ້ຮັບໃຊ້ເປັນປະທານສະມາຄົມສະຕີສົງເຄາະຄົນທຳອິດນຳອີກ.

ການເປີດເຜີຍໄດ້ຖືກມອບໃຫ້ເອມມາ ສະມິດ ກ່ຽວກັບພຣະປະສົງຂອງພຣະຜູ້ເປັນເຈົ້າ, **ຄພ** 25. ພຣະຜູ້ເປັນເຈົ້າໄດ້ແນະນຳ

ນາງເອມມາ ສະມິດ ເລື່ອງການແຕ່ງງານ, **ຄພ** 132:51–56.

**ສະມິດ, ໄຮຣຳ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ອ້າຍ ແລະ ຜູ້ຮ່ວມງານທີ່ຊື່ສັດຄົນໜຶ່ງຂອງໂຈເຊັບ ສະມິດ. ໄຮຣຳ ໄດ້ ເກີດໃນວັນທີ 9 ເດືອນກຸມພາ, 1800. ເພິ່ນໄດ້ຮັບໃຊ້ ເປັນຜູ້ຊ່ວຍຂອງໂຈເຊັບ ໃນຝ່າຍປະທານຂອງສາດສະໜາ ຈັກ, ຕະຫລອດທັງໄດ້ ເປັນປິຕຸ ຄົນທີສອງຂອງສາດສະໜາຈັກ. ເມື່ອວັນທີ 27 ເດືອນ ມິຖຸນາ, 1844, ເພິ່ນ ໄດ້ ຖືກ ຂ້າຍ້ອນຄວາມເຊື່ອ ພ້ອມກັບໂຈເຊັບ ໃນຄຸກຄາດເທດ.

ພຣະຜູ້ເປັນເຈົ້າໄດ້ເປີດເຜີຍຄຳແນະນຳຕໍ່ໄຮຣຳ ຜ່ານທາງໂຈເຊັບ ນ້ອງຊາຍຂອງເພິ່ນ, **ຄພ** 11; 23:3. ຜູ້ຮັບໃຊ້ຂອງເຮົາ ໄຮຣຳ ສະມິດ ເປັນສຸກແລ້ວ ເພາະຄວາມຊື່ສັດຂອງໃຈລາວ, **ຄພ** 124:15. ໄຮຣຳໄດ້ຖືກບັນຊາໃຫ້ຮັບຕຳແໜ່ງເປັນປິຕຸຂອງສາດສະໜາຈັກ, **ຄພ** 124:91–96, 124. ໂຈເຊັບ ແລະ ໄຮຣຳໄດ້ຖືກຂ້າຍ້ອນຄວາມເຊື່ອໃນຄຸກຄາດເທດ, **ຄພ** 135. ໄຮຣຳ ແລະ ວິນຍານທີ່ໂປດປານອື່ນໆ ຜູ້ທີ່ໄດ້ຖືກຮັກສາໄວ້ເພື່ອໃຫ້ອອກມາໃນຄວາມສົມບູນແຫ່ງເວລາ, **ຄພ** 138:53.

**ສະຫງົບ, ຄວາມສະຫງົບ.** *ເບິ່ງ* ຄົນທີ່ສ້າງຄວາມສະຫງົບສຸກ; ພັກຜ່ອນ; ພັນປີ *ນຳອີກ*

ໃນພຣະຄຳພີ, ສັນຕິສຸກ (ຄວາມສະຫງົບ) ສາມາດໝາຍເຖິງທັງອິດສະລະພາບຈາກການຂັດແຍ້ງ ແລະ ຄວາມວຸ້ນວາຍ ຫລື ຄວາມສະຫງົບພາຍໃນ ແລະ ຄວາມປອບໂຍນທີ່ເກີດຈາກພຣະວິນຍານທີ່ພຣະເຈົ້າໄດ້ປະທານໃຫ້ແກ່ໄພ່ພົນທີ່ຊື່ສັດຂອງພຣະອົງ.

*ອິດສະລະພາບຈາກການຂັດແຍ້ງ ແລະ ຄວາມວຸ້ນວາຍ:* ພຣະອົງເຮັດໃຫ້ເສິກສົງຄາມຢຸດຕິລົງ, **ພສສ** 46:9. ປະຊາຊົນຈະບໍ່ຕຽມເຂົ້າສູ່ການສົງຄາມອີກຈັກເທື່ອ, **ອຊຢ** 2:4.

ຈົ່ງຢູ່ຢ່າງສະຫງົບສຸກກັບທຸກໆຄົນ; ຢ່າແກ້ແຄ້ນເລີຍ, **ຣມ** 12:18–21.

ສັນຕິສຸກກໍຍັງມີຢູ່ໃນແຜ່ນດິນ, **4 ນຟ** 1:4, 15–20.

ຈົ່ງເລີກເຮັດສົງຄາມ ແລະ ປະກາດສັນຕິສຸກ, **ຄພ** 98:16. ຈົ່ງຍົກປ້າຍສັນຍານແຫ່ງສັນຕິພາບຂຶ້ນ, **ຄພ** 105:39.

*ສັນຕິສຸກຈາກພຣະເຈົ້າແກ່ຜູ້ທີ່ເຊື່ອຟັງ:* ພຣະຜູ້ຊ່ວຍໃຫ້ລອດຈະຖືກເອີ້ນວ່າ ອົງສັນຕິລາດ, **ອຊຢ** 9:6. ສັນຕິສຸກຈະບໍ່ມີສຳລັບພວກຄົນຊົ່ວ, **ອຊຢ** 48:22.

ກໍມີກອງທັບເທວະດາແຫ່ງສະຫວັນໝູ່ໃຫຍ່, ຮ່ວມກັນຮ້ອງເພງສັນລະເສີນພຣະເຈົ້າວ່າ ລັດສະໝີພາບຈົ່ງມີແກ່ພຣະເຈົ້າໃນສະຫວັນທີ່ສູງສຸດ ແລະ ທີ່ແຜ່ນດິນໂລກຈົ່ງມີສັນຕິສຸກ, **ລກ** 2:13–14. ເຮົາມອບສັນຕິສຸກໄວ້ກັບພວກເຈົ້າ, **ຢຮ** 14:27. ສັນຕິສຸກອັນມາແຕ່ພຣະເຈົ້າ ຊຶ່ງເກີນຄວາມເຂົ້າໃຈຈະເຝົ້າຮັກສາຈິດໃຈ ແລະ ຄວາມຄິດຂອງເຈົ້າທັງຫລາຍ, **ຟລປ** 4:7.

ຜູ້ຄົນຂອງກະສັດເບັນຢາມິນໄດ້ຮັບຄວາມສະຫງົບໃນຈິດສຳນຶກ, **ມຊຢ** 4:3. ຕີນຂອງຜູ້ທີ່ຢູ່ເທິງພູ ຊຶ່ງປະກາດຄວາມສັນຕິສຸກນັ້ນງາມພຽງໃດ, **ມຊຢ** 15:14–18 (ອຊຢ 52:7). ແອວມາໄດ້ຮ້ອງທູນຂໍຈາກພຣະຜູ້ເປັນເຈົ້າ ແລະ ໄດ້ພົບສັນຕິສຸກ, **ແອວ** 38:8. ວິນຍານຂອງຜູ້ທີ່ຊອບທຳຈະຖືກຮັບເຂົ້າໃນສະພາບຂອງສັນຕິສຸກ, **ແອວ** 40:12.

ເຮົາບໍ່ໄດ້ກ່າວໃຫ້ຄວາມສະຫງົບ ແກ່ຈິດໃຈຂອງເຈົ້າບໍກ່ຽວກັບເລື່ອງນີ້, **ຄພ** 6:23. ຈົ່ງເດີນໄປໃນຄວາມອ່ອນໂຍນແຫ່ງພຣະວິນຍານຂອງເຮົາ, ແລະ ເຈົ້າຈະມີຄວາມສັນຕິສຸກໃນເຮົາ, **ຄພ** 19:23. ຄົນທີ່ເຮັດວຽກງານແຫ່ງຄວາມຊອບທຳຈະໄດ້ຮັບສັນຕິສຸກ, **ຄພ** 59:23. ຈົ່ງຫຸ້ມຫໍ່ຕົນເອງດ້ວຍພັນທະແຫ່ງຄວາມໃຈບຸນ, ຊຶ່ງເປັນພັນທະແຫ່ງຄວາມດີພ້ອມ ແລະ ສັນຕິສຸກ, **ຄພ** 88:125. ລູກເອີຍ, ສັນຕິສຸກຈົ່ງມີແກ່ຈິດວິນຍານຂອງເຈົ້າ, **ຄພ** 121:7.

ໂດຍທີ່ພົບວ່າມີສັນຕິສຸກຫລາຍຂຶ້ນ, ຂ້າພະເຈົ້າຈຶ່ງໄດ້ສະແຫວງຫາພອນຂອງບັນພະບຸລຸດ, **ອຣຮ** 1:2.

**ສະໄໝບູຮານ.** *ເບິ່ງ* ອາດາມ

**ສະຫລາກ**

ວິທີເລືອກ ຫລື ກຳ ຈັດການ ເລືອກຫລາຍຢ່າງ, ສ່ວນຫລາຍແມ່ນເຮັດໂດຍການເລືອກເອົາເຈ້ຍໃບໜຶ່ງ ຫລື ເອົາໄມ້ອັນໜຶ່ງ. ສິ່ງນີ້ເອີ້ນວ່າ ສະຫລາກ.

ພວກເຂົາກໍໄດ້ແບ່ງປັນເຄື່ອງນຸ່ງຂອງພຣະອົງ ໂດຍ ໃຊ້ ສະຫລາກ, **ມທ** 27:35 (ພສສ 22:18; ມຣກ 15:24; ລກ 23:34; ຢຮ 19:24). ພວກເຂົາໄດ້ໃຊ້ສະຫລາກ, ແລະ ຜູ້ທີ່ຖືກເລືອກ ແມ່ນມັດເທຍ, **ກຈກ** 1:23–26.

ພວກເຮົາຈົກສະຫລາກກັນ ວ່າຜູ້ໃດໃນກຸ່ມພວກເຮົາ ຈະໄດ້ເຂົ້າໄປໃນບ້ານຂອງລາບານ, **1 ນຟ** 3:11.

**ສະຫວັນ.** *ເບິ່ງ* ທີ່ສຸຂະເສີມ; ລັດສະໝີພາບຂອງຊັ້ນສູງ; ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ *ບຳອີກ*

ຄຳວ່າສະຫວັນມີຄວາມໝາຍຕົ້ນຕໍຢູ່ສອງຢ່າງໃນພຣະຄຳພີ. (1) ມັນເປັນບ່ອນທີ່ພຣະເຈົ້າອາໄສຢູ່ ແລະ ເປັນບ້ານໃນອະນາຄົດຂອງໄພ່ພົນຂອງພຣະເຈົ້າ (ປຖກ 28:12; ພສສ 11:4; ມທ 6:9). (2) ມັນຢູ່ອ້ອມຮອບແຜ່ນດິນໂລກ (ປຖກ 1:1, 17; ອພຍ 24:10). ສະຫວັນບໍ່ແມ່ນ ທີ່ສຸຂະເສີມ, ຊຶ່ງເປັນສະຖານທີ່ຊົ່ວຄາວ ບ່ອນທີ່ວິນຍານທີ່ຊື່ສັດຂອງຄົນທີ່ເຄີຍມີຊີວິດຢູ່ ແລະ ໄດ້ຕາຍໄປຢູ່ໃນແຜ່ນດິນໂລກ. ພຣະເຢຊູໄດ້ໄປຢ້ຽມຢາມທີ່ສຸຂະເສີມຫລັງຈາກທີ່ພຣະອົງໄດ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນ, ແຕ່ໃນມື້ທີສາມ, ພຣະອົງໄດ້ບອກນາງມາຣີວ່າ ພຣະອົງຍັງບໍ່ໄດ້ກັບໄປຫາພຣະບິດາເທື່ອ (ລກ 23:39–44; ຢຮ 20:17; ຄພ 138:11–37).

ຂ້ານ້ອຍຫລຽວເບິ່ງຟ້າສະຫວັນທີ່ພຣະອົງໄດ້ສ້າງຂຶ້ນມາ, **ພສສ** 8:3. ພຣະຜູ້ເປັນເຈົ້າໄດ້ສ້າງສະຫວັນດ້ວຍຄຳສັ່ງຂອງພຣະອົງ, **ພສສ** 33:6. ໂອ້ ລູຊີເຟີເອີຍ ເຈົ້າໄດ້ຕົກລົງຈາກສະຫວັນແລ້ວນໍ, **ອຊຢ** 14:12 (2 ນຟ 24:12). ຟ້າສະຫວັນຈະດັບສູນໄປດັ່ງໜັງສືມ້ວນທີ່ໄດ້ມ້ວນໄວ້, **ອຊຢ** 34:4. ເຮົາກຳລັງສ້າງຟ້າສະຫວັນໃໝ່ ແລະ ແຜ່ນດິນໂລກໃໝ່, **ອຊຢ** 65:17. ພຣະເຈົ້າຈະໄຂປະຕູສະຫວັນ, **ມລກ** 3:10.

ຂ້າ ແດ່ພຣະບິດາເຈົ້າຜູ້ສະຖິດຢູ່ໃນສະຫວັນ, ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາລົບບູຊາ, **ມທ** 6:9 (3 ນຟ 13:9). ໂປໂລໄດ້ຖືກຮັບຂຶ້ນໄປເຖິງສະຫວັນຊັ້ນທີສາມ, **2 ກຣທ** 12:2. ໃນສະຫວັນກໍງຽບສະຫງັດ, **ພນມ** 8:1 (ຄພ 88:95–98).

ຖ້າຫາກເຂົາອົດທົນຢ່າງຊື່ສັດຈົນເຖິງທີ່ສຸດແລ້ວ ເຂົາຈະຖືກຮັບເຂົ້າສູ່ສະຫວັນ, **ມຊຢ** 2:41. ເຈົ້າຈະໄດ້ເປັນລູກຂອງພຣະບິດາຂອງເຈົ້າຜູ້ປະທັບຢູ່ໃນສະຫວັນ, **3 ນຟ** 12:45.

ເຮົາຈະມາໃນໝູ່ເມກແຫ່ງຟ້າສະຫວັນ, **ຄພ** 45:16. ເອລີຢາໄດ້ຖືກຮັບຂຶ້ນໄປສະຫວັນໂດຍບໍ່ໄດ້ຊີມລົດຊາດຂອງຄວາມຕາຍ, **ຄພ** 110:13. ສິດຂອງຖານະປະໂລຫິດກ່ຽວຂ້ອງກັບອຳນາດແຫ່ງສະຫວັນ, **ຄພ** 121:36. ມີຮ່າງກາຍສອງປະເພດຢູ່ໃນສະຫວັນ, **ຄພ** 129:1.

ຊີໂອນໄດ້ຖືກຮັບຂຶ້ນໄປສະຫວັນ, **ມຊ** 7:23.

**ສະອາດ ແລະ ບໍ່ສະອາດ.** *ເບິ່ງ* ກົດຂອງໂມເຊ; ສົກກະປົກ, ຄວາມສົກກະປົກ; ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ *ບຳອີກ*

ໃນພຣະຄຳພີເດີມ, ພຣະຜູ້ເປັນເຈົ້າໄດ້ເປີດເຜີຍຕໍ່ໂມເຊ ແລະ ຊາວອິດສະຣາເອນໃນສະໄໝບູຮານວ່າ ອາຫານສະເພາະບາງຢ່າງເທົ່ານັ້ນທີ່ຖືວ່າສະອາດ ຫລື, ອີກຄຳໜຶ່ງ, ເໝາະສົມທີ່ຈະບໍລິໂພກ. ຄວາມແຕກຕ່າງຂອງອາຫານທີ່ຊາວອິດສະຣາເອນນັບຖືວ່າສະອາດ ແລະ ບໍ່ສະອາດ ມີຄວາມສຳຄັນຫລາຍໃນຊີວິດຂອງເຂົາເຈົ້າທາງສາດສະໜາ ແລະ ທາງສັງຄົມ. ສັດສາວາສິ່ງ, ນົກ, ແລະ ປາບາງຊະນິດຖືກນັບວ່າ ສະອາດ ແລະ ເໝາະສົມທີ່ຈະບໍລິໂພກ, ສ່ວນສັດທີ່ບໍ່ສະອາດນັ້ນ ເຂົາເຈົ້າຖືກສັ່ງຫ້າມບໍ່ໃຫ້ບໍລິໂພກ (ລລວ 11; ພບຍ 14:3–20). ຜູ້ຄົນທີ່ເປັນພະຍາດກໍຖືວ່າເປັນສິ່ງທີ່ບໍ່ສະອາດຄືກັນ.

ໃນ ຄວາມ ຮູ້ ສຶກທາງວິນຍານ, ສະອາດໝາຍເຖິງການເປັນອິດສະລະຈາກບາບ ແລະ

ຄວາມປາດຖະໜາທີ່ເປັນບາບ. ໃນຄວາມຮູ້ສຶກນີ້ ຖ້ອຍ ຄຳ ນີ້ຈຶ່ງຖືກໃຊ້ເພື່ອບັນລະຍາຍເຖິງບຸກຄົນທີ່ມີຄຸນນະທຳ ແລະ ຫົວໃຈທີ່ບໍລິສຸດ (ພສສ 24:4). ຜູ້ຄົນແຫ່ງພັນທະສັນຍາຂອງພຣະເຈົ້າໄດ້ຮັບຄຳແນະນຳພິເສດສະເໝີໃຫ້ເປັນຄົນສະອາດ (3 ນຟ 20:41; ຄພ 38:42; 133:5).

ພວກທີ່ບໍລິສຸດໃນຄວາມຄິດ ແລະ ການກະທຳຈະມີສິດຂຶ້ນໄປທີ່ເນີນພູຂອງພຣະຜູ້ເປັນເຈົ້າ, **ພສສ** 24:3–5.

ບໍ່ຕ້ອງຖືຄົນໃດຄົນໜຶ່ງວ່າສະອາດ ຫລື ເປັນມົນທິນ, **ກຈກ** 10:11–28.

ພວກທ່ານຈະເງີຍໜ້າເບິ່ງພຣະເຈົ້າໃນມື້ນັ້ນດ້ວຍໃຈອັນບໍລິສຸດ ແລະ ດ້ວຍມືທີ່ສະອາດໄດ້ບໍ, **ແອວ** 5:19.

ພຣະຜູ້ເປັນເຈົ້າຈະຕີສອນຊີໂອນຈົນກວ່າມັນສະອາດ, **ຄພ** 90:36. ພວກເຈົ້າທີ່ຖືພາຊະນະຂອງພຣະຜູ້ເປັນເຈົ້າຈົ່ງຮັກສາຕົວໃຫ້ສະອາດ, **ຄພ** 133:4–5, 14 (ອຊຢ 52:11).

**ສັກສິດ, ຄວາມສັກສິດ.** *ເບິ່ງ* ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ; ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ *ນຳອີກ*

ສັກສິດ, ມີຄຸນສົມບັດຢ່າງພຣະເຈົ້າ, ມີຄວາມບໍລິສຸດ ຫລື ຄວາມດີພ້ອມທາງວິນຍານ ແລະ ທາງສິນທຳ. ຄວາມສັກສິດບົ່ງບອກເຖິງຄວາມບໍລິສຸດຂອງຫົວໃຈ ແລະ ຄວາມປະສົງຂອງບຸກຄົນ. ກົງກັນຂ້າມກັບຄຳວ່າ ສັກສິດແມ່ນຄຳວ່າ ທຳມະດາ ຫລື ຫຍາບຄາຍ.

ພວກເຈົ້າຈະເປັນປະຊາຊົນຂອງເຮົາ ໃນຖານະປະໂລຫິດ, ແລະ ເປັນປະຊາຊາດທີ່ສັກສິດ, **ອພຍ** 19:5–6 (1 ປຕ 2:9). ພຣະຜູ້ເປັນເຈົ້າໄດ້ບັນຊາຊາວອິດສະຣາເອນວ່າ: ພວກເຈົ້າຕ້ອງບໍລິສຸດ ເພາະເຮົາບໍລິສຸດ, **ລລວ** 11:44–45. ໃຜມີສິດຂຶ້ນໄປທີ່ເນີນພູ ຄືພວກທີ່ບໍລິສຸດໃນຄວາມຄິດ ແລະ ການກະທຳ, **ພສສ** 24:3–4. ຕ້ອງສິດສອນປະຊາຊົນຂອງເຮົາໃຫ້ຮູ້ວ່າ ສິ່ງໃດສັກສິດ ແລະ ສິ່ງໃດບໍ່ສັກສິດ, **ອຊກ** 44:23.

ພຣະເຈົ້າໄດ້ເອີ້ນເຮົາດ້ວຍການເອີ້ນທີ່ສັກສິດ, **2 ຕມທ** 1:8–9. ເຈົ້າໄດ້ຮູ້ພຣະຄຳພີອັນສັກສິດຕັ້ງແຕ່ຄາວເຈົ້າຍັງນ້ອຍພຸ້ນ, **2 ຕມທ** 3:15. ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າຕາມທີ່ພຣະວິນຍານບໍລິສຸດເຈົ້າຊົງດົນໃຈ, **2 ປຕ** 1:21.

ມະນຸດທັງປວງຕ້ອງຖືກພິພາກສາຕາມຄວາມຈິງ ແລະ ຄວາມບໍລິສຸດ ຊຶ່ງມີຢູ່ໃນພຣະເຈົ້າ, **2 ນຟ** 2:10. ມະນຸດທີ່ມີຈິດໃຈທຳມະດາກາຍມາເປັນໄພ່ພົນຂອງພຣະເຈົ້າຜ່ານການຊົດໃຊ້ຂອງພຣະຄຣິດ, **ມຊຢ** 3:19. ເດີນໄປຕາມລະບຽບອັນສັກສິດຂອງພຣະເຈົ້າ, **ແອວ** 7:22 (ແອວ 13:11–12). ສານຸສິດສາມຄົນໄດ້ຮັບການຊຳລະໃຫ້ບໍລິສຸດແລ້ວໃນເນື້ອໜັງ ແລະ ໄດ້ຖືກເຮັດໃຫ້ສັກສິດ, **3 ນຟ** 28:1–9, 36–39.

ຢ່າເຮັດຫລິ້ນໆກັບສິ່ງທີ່ສັກສິດ, **ຄພ** 6:12. ເຈົ້າຈະບໍ່ສາມາດຂຽນສິ່ງທີ່ສັກສິດນອກຈາກເຈົ້າຈະໄດ້ຮັບມັນຈາກເຮົາ, **ຄພ** 9:9. ສະມາຊິກຕ້ອງສະແດງໃຫ້ປະຈັກວ່າເຂົາເຈົ້າມີຄ່າຄວນຕໍ່ສາດສະໜາຈັກ ໂດຍການເດີນໄປໃນຄວາມບໍລິສຸດຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, **ຄພ** 20:69. ເຈົ້າຈະຜູກມັດຕົວເອງທີ່ຈະກະທຳໃນຄວາມສັກສິດທັງໝົດ, **ຄພ** 43:9. ສານຸສິດຂອງເຮົາຈະຢືນຢູ່ໃນສະຖານທີ່ສັກສິດ, **ຄພ** 45:32. ສິ່ງທີ່ມາຈາກເບື້ອງເທິງເປັນສິ່ງສັກສິດ, **ຄພ** 63:64. ເດັກນ້ອຍໆບໍລິສຸດ, **ຄພ** 74:7. ບ້ານຂອງພຣະຜູ້ເປັນເຈົ້າເປັນສະຖານທີ່ສັກສິດ, **ຄພ** 109:13. ອຸທິດຖວາຍບ່ອນນັ້ນ ແລະ ມັນຈະຖືກເຮັດໃຫ້ສັກສິດ, **ຄພ** 124:44.

ພຣະຜູ້ບໍລິສຸດຄືພຣະນາມໜຶ່ງອີກຂອງພຣະເຈົ້າ, **ມຊ** 6:57 (ມຊ 7:35). ພຣະຜູ້ເປັນເຈົ້າຈະເຕົ້າໂຮມຜູ້ທີ່ພຣະອົງເລືອກໄວ້ ໄປສູ່ນະຄອນສັກສິດ, **ມຊ** 7:62.

**ສັກສິດທີ່ສຸດ.** *ເບິ່ງ* ສະຖານທີ່ນະມັດສະການ; ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ *ນຳອີກ*

ເປັນ ຫ້ອງທີ່ສັກສິດທີ່ສຸດໃນສະຖານທີ່ນະມັດສະການຂອງໂມເຊ ແລະ ຕໍ່ມາໃນພຣະວິຫານ. ສັກສິດທີ່ສຸດກໍຖືກເອີ້ນວ່າ "ບ່ອນສັກສິດທີ່ສຸດ" ນຳອີກ (ອພຍ 26:33–34).

**ສັ່ງສອນ.** *ເບິ່ງ* ພຣະກິດຕິຄຸນ; ວຽກງານເຜີຍແຜ່ *ນຳອີກ*

ການບອກຂ່າວສານ ທີ່ໃຫ້ຄວາມເຂົ້າໃຈຫລາຍຂຶ້ນເລື່ອງຫລັກທຳ ຫລື ຄຳສອນຂອງພຣະກິດຕິຄຸນ.

ພຣະຜູ້ເປັນເຈົ້າໄດ້ຫົດສົງແຕ່ງຕັ້ງເຮົາໄວ້ເພື່ອນຳເອົາຂ່າວປະເສີດໄປສູ່ຜູ້ອ່ອນໂຍນ, **ອຊຢ** 61:1 (ລກ 4:16–21). ຈົ່ງໄປຍັງນີເນເວ ແລະ ປະກາດຖ້ອຍຄຳແກ່ປະຊາຊົນ, **ຢນ** 3:2–10.

ຕັ້ງແຕ່ເວລານັ້ນມາ ພຣະເຢຊູກໍເລີ່ມຕົ້ນປ່າວປະກາດ, **ມທ** 4:17. ເຈົ້າທັງຫລາຍຈົ່ງໄປທົ່ວໂລກ, ປະກາດຂ່າວປະເສີດແກ່ມະນຸດສະໂລກທັງໝົດ, **ມຣກ** 16:15. ພວກເຮົາປະກາດເລື່ອງພຣະຄຣິດ ຜູ້ຖືກຄຶງ, **1 ກຣທ** 1:22–24. ພຣະອົງໄດ້ສະເດັດໄປປະກາດແກ່ບັນດາວິນຍານທີ່ຖືກຄຸກຢູ່, **1 ປຕ** 3:19.

ບໍ່ມີຫຍັງເລີຍນອກຈາກການສັ່ງສອນ ແລະ ການກະຕຸ້ນພວກເຂົາຢູ່ຕະຫລອດວັນເວລາ ຢູ່ໃນຄວາມຢ້ານກົວພຣະຜູ້ເປັນເຈົ້າ, **ອນ** 1:23. ເພິ່ນໄດ້ສັ່ງພວກເຂົາວ່າ ບໍ່ໃຫ້ສັ່ງສອນສິ່ງອື່ນນອກຈາກຈະເປັນເລື່ອງຂອງການກັບໃຈ ແລະ ມີສັດທາໃນພຣະຜູ້ເປັນເຈົ້າ, **ມຊຢ** 18:20. ການສິດສອນພຣະຄຳອັນຍິ່ງໃຫຍ່ນີ້ໄດ້ນຳພາຜູ້ຄົນມາເຮັດໃນສິ່ງທີ່ຖືກຕ້ອງ, **ແອວ** 31:5.

ເຈົ້າບໍ່ຄວນຄິດວ່າ ເຈົ້າຖືກເອີ້ນໃຫ້ສັ່ງສອນຈົນກວ່າເຈົ້າຖືກເອີ້ນ, **ຄພ** 11:15. ຈະບໍ່ຖືກມອບໃຫ້ແກ່ຄົນໃດເພື່ອໄປສັ່ງສອນ ຍົກເວັ້ນແຕ່ເຂົາຈະໄດ້ຮັບການແຕ່ງຕັ້ງ, **ຄພ** 42:11. ພຣະກິດຕິຄຸນນີ້ຈະຖືກສັ່ງສອນແກ່ທຸກປະຊາຊາດ, **ຄພ** 133:37.

ໄດ້ເລີ່ມມີການສັ່ງສອນພຣະກິດຕິຄຸນຕັ້ງແຕ່ຕົ້ນ, **ມຊ** 5:58.

**ສັດທາ.** *ເບິ່ງ* ເຊື່ອ, ຄວາມເຊື່ອ; ພຣະເຢຊູຄຣິດ; ໄວ້ວາງໃຈ, ຄວາມໄວ້ວາງໃຈ; ຫວັງ, ຄວາມຫວັງ *ນຳອີກ*

ຄວາມໝັ້ນໃຈໃນບາງສິ່ງ ຫລື ໃນບາງຄົນ. ດັ່ງທີ່ມັກໃຊ້ຢູ່ໃນພຣະຄຳພີ, ສັດທາຄືຄວາມໝັ້ນໃຈ ແລະ ຄວາມໄວ້ວາງໃຈໃນພຣະເຢຊູຄຣິດ ທີ່ນຳພາບຸກຄົນໄປເຊື່ອຟັງພຣະອົງ. ຈະຕ້ອງມີສັດທາໃນພຣະເຢຊູຄຣິດ ກ່ອນມັນຈະນຳພາບຸກຄົນໄປສູ່ຄວາມລອດ. ໄພ່ພົນຍຸກສຸດທ້າຍກໍມີສັດທາໃນພຣະເຈົ້າ ພຣະບິດາ, ພຣະວິນຍານບໍລິສຸດ, ອຳນາດຖານະປະໂລຫິດ, ແລະ ພາກສ່ວນອື່ນໆທີ່ສຳຄັນເລື່ອງການຟື້ນຟູພຣະກິດຕິຄຸນນຳອີກ.

ສັດທາແມ່ນຮ່ວມດ້ວຍຄວາມຫວັງໃນສິ່ງທີ່ບໍ່ເຄີຍເຫັນ, ແຕ່ເປັນຄວາມຈິງ (ຮຣ 11:1; ແອວ 32:21; ອທ 12:6). ສັດທາຈະມີມາໂດຍການໄດ້ຍິນພຣະກິດຕິຄຸນ ຊຶ່ງສິດສອນໂດຍຜູ້ປະຕິບັດທີ່ມີສິດ ທີ່ຖືກພຣະເຈົ້າສົ່ງມາ (ຣມ 10:14–17). ສິ່ງມະຫັດສະຈັນຈະບໍ່ເກີດຂຶ້ນກ່ອນສັດທາ, ແຕ່ສັດທາທີ່ເຂັ້ມແຂງຈະຖືກພັດທະນາຂຶ້ນໂດຍຄວາມເຊື່ອຕໍ່ພຣະກິດຕິຄຸນຂອງພຣະເຢຊູຄຣິດ. ອີກຄຳໜຶ່ງ, ສັດທາມາເຖິງໂດຍຄວາມຊອບທຳ (ແອວ 32:40–43; ອທ 12:4, 6, 12; ຄພ 63:9–12).

ສັດທາທີ່ແທ້ຈິງຈະເຮັດໃຫ້ເກີດສິ່ງມະຫັດສະຈັນ, ພາບນິມິດ, ຄວາມຝັນ, ການປິ່ນປົວ, ແລະ ຂອງປະທານທັງໝົດຂອງພຣະເຈົ້າທີ່ພຣະອົງປະທານໃຫ້ໄພ່ພົນຂອງພຣະອົງ. ໂດຍສັດທາບຸກຄົນຈະໄດ້ຮັບການປົດບາບ ແລະ ໃນທີ່ສຸດຈະສາມາດອາໄສຢູ່ໃນທີ່ປະທັບຂອງພຣະເຈົ້າໄດ້. ການຂາດສັດທາຈະພາບຸກຄົນໄປສູ່ຄວາມໝົດຫວັງ, ຊຶ່ງມາເຖິງເພາະຄວາມຊົ່ວຮ້າຍ (ມຣນ 10:22).

ຄົນທີ່ຊອບທຳຈະມີຊີວິດຢູ່ດ້ວຍວ່າເຂົາຊື່ສັດ, **ຮບກ** 2:4.

ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ, **ມທ** 9:22 (ມຣກ 5:34; ລກ 7:50). ໃຫ້ເປັນໄປຕາມຄວາມເຊື່ອຂອງພວກເຈົ້າເຖີດ, **ມທ** 9:29. ຖ້າພວກເຈົ້າມີຄວາມເຊື່ອທໍ່ເມັດຜັກກາດ, ບໍ່ມີສິ່ງໃດທີ່ພວກເຈົ້າເຮັດບໍ່ໄດ້, **ມທ** 17:20 (ລກ 17:6). ເຮົາໄດ້ອະທິຖານສຳລັບເຈົ້າ, ເພື່ອຄວາມເຊື່ອຂອງເຈົ້າຈະບໍ່ຂາດໄປ, **ລກ** 22:32. ດ້ວຍຄວາມເຊື່ອໃນພຣະນາມຂອງພຣະຄຣິດ ຈຶ່ງເຮັດໃຫ້ຄົນນີ້ມີແຮງຂຶ້ນມາ, **ກຈກ** 3:16. ຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນພຣະຄຳຂອງພຣະເຈົ້າ,

**ຣມ** 10:17. ຖ້າພຣະຄຣິດບໍ່ໄດ້ຟື້ນຄືນພຣະຊົນ ຄວາມເຊື່ອຂອງພວກເຈົ້າກໍບໍ່ມີປະໂຫຍດເໝືອນກັນ, **1 ກຣທ** 15:14. ແມ່ນຄວາມເຊື່ອທີ່ສະແດງອອກໂດຍທາງຄວາມຮັກ, **ຄລຕ** 5:6. ທ່ານທັງຫລາຍໄດ້ຖືກໃຫ້ພົ້ນນັ້ນກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ, **ອຟຊ** 2:8 (2 ນຟ 25:23). ຈົ່ງຍົກເອົາຄວາມເຊື່ອເປັນເຂນ, **ອຟຊ** 6:16 (ຄພ 27:17). ເຮົາໄດ້ຕໍ່ສູ້ຢ່າງສຸດກຳລັງ ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ, **2 ຕມທ** 4:7. ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້, **ຮຣ** 11:1. ຖ້າບໍ່ມີຄວາມເຊື່ອແລ້ວຈະເປັນທີ່ພໍພຣະໄທຕໍ່ພຣະອົງບໍ່ໄດ້, **ຮຣ** 11:6. ຄວາມເຊື່ອກໍຢ່າງດຽວກັນຖ້າບໍ່ມີການປະຕິບັດກໍຕາຍແລ້ວ, **ຢກບ** 2:17–18, 22.

ເຮົາຈະໄປ ແລະ ເຮັດສິ່ງທີ່ພຣະຜູ້ເປັນເຈົ້າບັນຊາ, **1 ນຟ** 3:7. ພຣະຜູ້ເປັນເຈົ້າສາມາດເຮັດທຸກສິ່ງທຸກຢ່າງໄດ້ເພື່ອລູກຫລານມະນຸດ, ຖ້າຫາກເຂົາຈະສະແດງສັດທາໃນພຣະອົງ, **1 ນຟ** 7:12. ເຂັມໃນເລຍໂຮນາທຳງານຕາມສັດທາ, **1 ນຟ** 16:28. ຈົ່ງກັບໃຈ ແລະ ຮັບບັບຕິສະມາໃນພຣະນາມຂອງພຣະອົງ, ໂດຍມີສັດທາທີ່ສົມບູນໃນພຣະຜູ້ບໍລິສຸດ, **2 ນຟ** 9:23. ພຣະຄຣິດເຮັດສິ່ງມະຫັດສະຈັນໃນບັນດາລູກຫລານມະນຸດຕາມສັດທາຂອງພວກເຂົາ, **2 ນຟ** 26:13 (ອທ 12:12; ມຣນ 7:27–29, 34–38). ບາບຂອງເອໂນດໄດ້ຖືກອະໄພໃຫ້ ເພາະສັດທາຂອງລາວໃນພຣະຄຣິດ, **ອນ** 1:3–8. ຄວາມລອດບໍ່ມາຫາຄົນແນວນັ້ນນອກຈາກໂດຍສັດທາໃນອົງພຣະເຢຊູຄຣິດເຈົ້າ, **ມຊຢ** 3:12. ໃຈປ່ຽນແປງແລ້ວໂດຍມີສັດທາໃນພຣະນາມຂອງພຣະອົງ, **ມຊຢ** 5:7. ຄຳອະທິຖານຂອງຜູ້ຮັບໃຊ້ຂອງພຣະເຈົ້າໄດ້ຮັບຄຳຕອບຕາມສັດທາຂອງພວກເຂົາ, **ມຊຢ** 27:14. ຈົ່ງໂຜດປະທານກຳລັງໃຫ້ພວກຂ້ານ້ອຍຕາມສັດທາຂອງພວກຂ້ານ້ອຍອັນມີຢູ່ໃນພຣະຄຣິດ, **ແອວ** 14:26. ຈົ່ງເອີ້ນຫາພຣະນາມຂອງພຣະເຈົ້າໃນສັດທາ, **ແອວ** 22:16. ສັດທາບໍ່ແມ່ນການມີຄວາມຮູ້ອັນສົມບູນເຖິງເລື່ອງຕ່າງໆ, **ແອວ** 32:21 (ອທ 12:6). ເພື່ອມັນຈະໄດ້ງອກງາມຂຶ້ນມາ ແລະ ຈົ່ງບຳລຸງມັນດ້ວຍສັດທາຂອງພວກທ່ານ, **ແອວ** 33:23 (ແອວ 32:28). ການຮັກສາຂອງພວກເຂົາໄດ້ເຮັດໃຫ້ພວກເຂົາເຊື່ອຢ່າງແນ່ນອນວ່າ ມັນເປັນອຳນາດອັນໜ້າອັດສະຈັນໃຈຂອງພຣະເຈົ້າ ຍ້ອນວ່າສັດທາຂອງພວກເຂົາມີຫລາຍທີ່ສຸດ, **ແອວ** 57:25–27. ເມື່ອຫລາຍຕໍ່ຫລາຍຄົນຫລຽວເບິ່ງພຣະບຸດຂອງພຣະເຈົ້າດ້ວຍສັດທາຈະມີຊີວິດ, **ຮລມ** 8:15. ເຮົາເຫັນວ່າເຈົ້າມີສັດທາພຽງພໍທີ່ຈະໃຫ້ເຮົາປິ່ນປົວເຈົ້າ, **3 ນຟ** 17:8. ຄວາມເຊື່ອຄືສິ່ງທີ່ມຸ້ງຫວັງໄວ້ ແລະ ຍັງບໍ່ທັນເຫັນ, **ອທ** 12:6. ຄົນທັງປວງທີ່ເຮັດສິ່ງມະຫັດສະຈັນກໍເຮັດດ້ວຍສັດທາ, **ອທ** 12:12–18. ຖ້າຫາກເຂົາມີສັດທາໃນເຮົາ, ເວລານັ້ນເຮົາຈະເຮັດໃຫ້ສິ່ງທີ່ອ່ອນແອນັ້ນກັບມາເຂັ້ມແຂງສຳລັບເຂົາ, **ອທ** 12:27–28, 37. ມໍມອນໄດ້ສິດສອນກ່ຽວກັບສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ, **ມຣນ** 7. ສິ່ງໃດກໍຕາມທີ່ດີທີ່ເຈົ້າທູນຂໍພຣະບິດາໃນນາມຂອງເຮົາ, ດ້ວຍສັດທາໂດຍເຊື່ອວ່າເຈົ້າຈະໄດ້ຮັບ, ຈົ່ງເບິ່ງ, ມັນກໍຈະເປັນໄປກັບເຈົ້າເຊັ່ນນັ້ນ, **ມຣນ** 7:26. ຄົນທີ່ມີສັດທາໃນພຣະຄຣິດຈະແນບສະໜິດໃນທຸກສິ່ງທີ່ດີ, **ມຣນ** 7:28. ຖ້າຫາກທ່ານທູນຖາມ, ໂດຍມີສັດທາໃນພຣະຄຣິດ, ພຣະອົງຈະສະແດງຄວາມຈິງຂອງເລື່ອງນີ້ໃຫ້ປະຈັກ, **ມຣນ** 10:4.

ປາດສະຈາກສັດທາ ເຈົ້າຈະເຮັດຫຍັງບໍ່ໄດ້; ສະນັ້ນ ຈົ່ງຂໍດ້ວຍສັດທາ, **ຄພ** 8:10. ມັນຈະຖືກມອບໃຫ້ເຂົາເຈົ້າຕາມສັດທາໃນຄຳອະທິຖານຂອງເຂົາເຈົ້າ, **ຄພ** 10:47, 52. ມະນຸດທັງປວງຈະຕ້ອງອົດທົນດ້ວຍສັດທາໃນພຣະນາມຂອງພຣະອົງຈົນເຖິງທີ່ສຸດ, **ຄພ** 20:25, 29. ພຣະວິນຍານຈະຖືກມອບໃຫ້ແກ່ເຈົ້າໂດຍການອະທິຖານດ້ວຍສັດທາ, **ຄພ** 42:14. ສັດທາບໍ່ໄດ້ມາເຖິງໂດຍເຄື່ອງໝາຍ, ແຕ່ເຄື່ອງໝາຍຕິດຕາມຄົນທີ່ເຊື່ອ, **ຄພ** 63:9–12. ພໍ່ແມ່ຕ້ອງສິດສອນລູກໆເລື່ອງສັດທາໃນພຣະຄຣິດ, **ຄພ** 68:25. ຈົ່ງສະແຫວງຫາການຮຽນຮູ້, ແມ່ນແຕ່ໂດຍການສຶກສາ ແລະ ໂດຍສັດທານຳອີກ, **ຄພ** 88:118.

ສັດທາໃນອົງພຣະເຢຊູຄຣິດເຈົ້າເປັນຫລັກທຳເບື້ອງຕົ້ນແຫ່ງພຣະກິດຕິຄຸນ, **ຫຼຊ** 1:4.

**ສັນຍາລັກ**

ການໃຊ້ບາງຢ່າງເພື່ອປຽບທຽບ ຫລື ເຮັດໃຫ້ເໝືອນບາງສິ່ງ. ໃນພຣະຄຳພີ ສັນຍາລັກຈະຖືກໃຊ້ສິ່ງຂອງ, ເຫດການ, ຫລື ສະພາບການທີ່ຮູ້ຈັກກັນດີ ເພື່ອເປັນຕົວແທນໃຫ້ແກ່ຫລັກທຳ ຫລື ຄຳສອນຂອງພຣະກິດຕິຄຸນ. ຍົກຕົວຢ່າງ, ສາດສະດາແອວມາໃນພຣະຄຳພີມໍມອນ ໄດ້ໃຊ້ເມັດພືດເປັນຕົວແທນໃຫ້ແກ່ພຣະຄຳຂອງພຣະເຈົ້າ (ແອວ 32).

ສາດສະດາຕະຫລອດທົ່ວພຣະຄຳພີ ໄດ້ໃຊ້ສັນຍາລັກ ເພື່ອສອນກ່ຽວກັບພຣະເຢຊູຄຣິດ. ສັນຍາລັກບາງຢ່າງເຫລົ່ານີ້ ແມ່ນລວມທັງພິທີສະຫລອງ ແລະ ພິທີການຕ່າງໆ (ມຊ 6:63), ການເສຍສະລະ (ຮຣ 9:11–15; ມຊ 5:7–8), ສິນລະລຶກ (ປຈສ, ມຣກ 14:20–24 [ພາກທ້ອຍທ້າຍ]; ລກ 22:13–20), ແລະ ການບັບຕິສະມາ (ຣມ 6:1–6; ຄພ 128:12–13). ຫລາຍຊື່ໃນພຣະຄຳພີເປັນສັນຍາລັກ. ພິທີການໃນຫໍເຕັ້ນສັກສິດ ໃນພຣະຄຳພີເດີມ ແລະ ກົດຂອງໂມເຊ ເປັນຕົວແທນໃຫ້ແກ່ຄວາມຈິງນິລັນດອນ (ຮຣ 8–10; ມຊຍ 13:29–32; ແອວ 25:15; ຣລມ 8:14–15). ສຳລັບຕົວຢ່າງອື່ນໆ, ເບິ່ງ ມທ 5:13–16; ຢຮ 3:14–15; ຢຄ 4:5; ແອວ 37:38–45.

**ສັນລະເສີນ.** *ເບິ່ງ* ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ; ລັດສະໝີພາບ

**ສ້າງ, ການສ້າງ.** *ເບິ່ງ* ການສ້າງວິນຍານ; ຕອນຕົ້ນ; ແຜ່ນດິນໂລກ; ພຣະເຢຊູຄຣິດ; ວັນຊະບາໂຕ *ບຳອິກ*

ເພື່ອຈັດລະບຽບ. ພຣະເຈົ້າ, ໂດຍທີ່ທຳງານຜ່ານທາງພຣະບຸດຂອງພຣະອົງ ພຣະເຢຊູຄຣິດ, ໄດ້ຈັດລະບຽບທາດມູນໃນທຳມະຊາດເພື່ອປະກອບຟ້າ ແລະ ແຜ່ນດິນໂລກ. ພຣະບິດາເທິງສະຫວັນ ແລະ ພຣະເຢຊູ ໄດ້ສ້າງມະນຸດຕາມຮູບຮ່າງລັກສະນະຂອງພວກພຣະອົງ (ມຊ 2:26–27).

ໃນຕອນຕົ້ນ ພຣະເຈົ້າໄດ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, **ປຖກ** 1:1. ເຮົາຈະສ້າງມະນຸດໃຫ້ຄ້າຍຄືເຮົາ, **ປຖກ** 1:26 (ມຊ 2:26–27; ອຣຮ 4:26).

ທຸກສິ່ງໄດ້ຖືກສ້າງຂຶ້ນໂດຍພຣະອົງ, **ຢຮ** 1:3, 10. ໂດຍພຣະອົງນັ້ນພຣະເຈົ້າໄດ້ສ້າງທຸກສິ່ງທັງປວງໃນຟ້າສະຫວັນ, **ກລຊ** 1:16 (ມຊຍ 3:8; ຣລມ 14:12). ດ້ວຍພຣະບຸດນັ້ນພຣະອົງໄດ້ສ້າງໂລກທັງຫລາຍ, **ຮຣ** 1:2.

ມະນຸດໄດ້ຖືກສ້າງຂຶ້ນແຕ່ຕອນຕົ້ນ, **ມຊຍ** 7:27. ເຮົາໄດ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ ລວມທັງທຸກສິ່ງທັງປວງ, **3 ນຟ** 9:15 (ມມ 9:11, 17). ມະນຸດທັງໝົດໄດ້ຖືກສ້າງມາຕັ້ງແຕ່ຕົ້ນຕາມຮູບຮ່າງລັກສະນະຂອງເຮົາເອງ, **ອທ** 3:15.

ພຣະເຢຊູຄຣິດໄດ້ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, **ຄພ** 14:9. ພຣະອົງໄດ້ສ້າງມະນຸດ, ຊາຍ ແລະ ຍິງ, ຕາມຮູບຮ່າງລັກສະນະຂອງພຣະອົງເອງ, **ຄພ** 20:18.

ໂລກຕ່າງໆຈົນນັບບໍ່ຖ້ວນ ເຮົາໄດ້ສ້າງຂຶ້ນມາ, **ມຊ** 1:33. ໂດຍພຣະອົງດຽວທີ່ຖືກຳເນີດຂອງເຮົາ, ເຮົາໄດ້ສ້າງຟ້າສະຫວັນ, **ມຊ** 2:1. ເຮົາ, ອົງພຣະຜູ້ເປັນເຈົ້າ, ໄດ້ສ້າງທຸກສິ່ງທັງປວງທາງວິນຍານກ່ອນມັນຈະເປັນຢູ່ທາງທຳມະຊາດຢູ່ເທິງພື້ນແຜ່ນດິນໂລກ, **ມຊ** 3:5. ແຜ່ນດິນໂລກນັບເປັນລ້ານໆທີ່ຄືກັນນີ້, ນີ້ຄົງບໍ່ໄດ້ເປັນການເລີ່ມຕົ້ນຂອງການສ້າງຂອງພຣະອົງ, **ມຊ** 7:30. ບັນດາພຣະເຈົ້າໄດ້ວາງລະບຽບ ແລະ ປະກອບຟ້າສະຫວັນ, **ອຣຮ** 4:1.

**ສາດສະດາ.** *ເບິ່ງ* ທຳນາຍ, ການທຳນາຍ, ຄຳທຳນາຍ; ປະທານ; ເປີດເຜີຍ, ການເປີດເຜີຍ; ຜູ້ພະຍາກອນ *ບຳອິກ*

ບຸກຄົນທີ່ຖືກເອີ້ນໂດຍພຣະເຈົ້າ ແລະ ໃຫ້ກ່າວແທນພຣະເຈົ້າ. ໃນຖານະອັກຄະທູດຂອງພຣະເຈົ້າ, ສາດສະດາໄດ້ຮັບພຣະບັນຍັດ, ການທຳນາຍ, ແລະ ການເປີດເຜີຍຈາກພຣະເຈົ້າ. ໜ້າທີ່ຮັບຜິດຊອບຂອງເພິ່ນແມ່ນທີ່ຈະປະກາດພຣະປະສົງຂອງພຣະເຈົ້າ ແລະ ລັກສະນະທີ່ແທ້ຈິງຂອງພຣະອົງ ແກ່ມະນຸດຊາດ ແລະ ເພື່ອສະແດງຄວາມໝາຍຂອງການກະ

ທຳຂອງພຣະອົງຕໍ່ເຂົາ. ສາດສະດາປະນາມບາບ ແລະ ບອກລ່ວງໜ້າກ່ຽວກັບຜົນສະທ້ອນຂອງມັນ. ເພິ່ນເປັນຄົນສັ່ງສອນຄວາມຊອບທຳ. ບາງຄັ້ງ ສາດສະດາ ອາດຖືກດົນໃຈໃຫ້ບອກເຖິງອະນາຄົດ ເພື່ອຜົນປະໂຫຍດຂອງມະນຸດຊາດ. ເຖິງຢ່າງໃດກໍຕາມ ໜ້າທີ່ຮັບຜິດຊອບຕົ້ນຕໍ ແມ່ນເພື່ອເປັນພະຍານເຖິງພຣະຄຣິດ. ປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ ແມ່ນສາດສະດາຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກໃນປະຈຸບັນ. ສະມາຊິກໃນຝ່າຍປະທານສູງສຸດ ແລະ ອັກຄະສາວົກສິບສອງໄດ້ຖືກສະໜັບສະໜູນເປັນສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍ.

ຢາກໃຫ້ພຣະເຈົ້າເຮັດໃຫ້ປະຊາຊົນທຸກໆຄົນຂອງພຣະຜູ້ເປັນເຈົ້າເປັນຜູ້ທຳນາຍ, **ຈບຊ** 11:29. ເມື່ອມີຜູ້ທຳນາຍໃນທ່າມກາງພວກເຈົ້າ, ເຮົາພຣະຜູ້ເປັນເຈົ້າຈະປະກົດເຮົາເອງໃຫ້ແກ່ພວກເຂົາເຫັນທາງນິມິດ, **ຈບຊ** 12:6. ພຣະຜູ້ເປັນເຈົ້າໄດ້ສົ່ງສາດສະດາໄປເຕືອນຊາວອິດສະຣາເອນ, **2 ກສ** 17:13 (2 ຂຄ 36:15–16; ຢມຢ 7:25). ເຮົາໄດ້ແຕ່ງຕັ້ງເຈົ້າໃຫ້ເປັນຜູ້ທຳນາຍແກ່ປະຊາຊາດທັງຫລາຍ, **ຢມຢ** 1:5, 7. ພຣະອົງໄດ້ເປີດເຜີຍຄວາມລັບຂອງພຣະອົງແກ່ຜູ້ທຳນາຍ ຄືຜູ້ຮັບໃຊ້ຂອງພຣະອົງ, **ອມ** 3:7.

ພຣະອົງໄດ້ກ່າວໄວ້ໂດຍປາກຂອງຜູ້ທຳນາຍບໍລິສຸດຂອງພຣະອົງ, **ລກ** 1:70 (ກຈກ 3:21). ຜູ້ທຳນາຍທຸກຄົນໄດ້ກ່າວເຖິງພຣະຄຣິດ, **ກຈກ** 10:43. ພຣະເຈົ້າໄດ້ຕັ້ງຜູ້ປະກາດພຣະທຳໄວ້ໃນສາດສະໜາຈັກ, **1 ກຣທ** 12:28 (ອຟຊ 4:11). ສາດສະໜາຈັກໄດ້ຖືກສ້າງຂຶ້ນເທິງຮາກຖານຂອງອັກຄະສາວົກ ແລະ ສາດສະດາ, **ອຟຊ** 2:19–20.

ຜູ້ຄົນບໍ່ຍອມຮັບຖ້ອຍຄຳຂອງສາດສະດາ, **1 ນຟ** 3:17–18 (2 ນຟ 26:3). ໂດຍພຣະວິນຍານ ທຸກຢ່າງຍ່ອມເປັນທີ່ຮູ້ແກ່ສາດສະດາ, **1 ນຟ** 22:1–2. ພຣະຄຣິດໄດ້ມາຫາຊາວນີໄຟເພື່ອເຮັດໃຫ້ທຸກສິ່ງທຸກຢ່າງທີ່ພຣະອົງເວົ້າໄວ້ໂດຍປາກຂອງສາດສະດາຜູ້ບໍລິສຸດຂອງພຣະອົງສຳເລັດ, **3 ນຟ** 1:13 (ຄພ 42:39).

ຜູ້ທີ່ບໍ່ເອົາໃຈໃສ່ຕໍ່ຖ້ອຍຄຳຂອງສາດສະດາຈະຖືກຕັດອອກ, **ຄພ** 1:14. ຄົນທີ່ເຊື່ອຖ້ອຍຄຳຂອງສາດສະດາ ຈະມີຊີວິດນິລັນດອນ, **ຄພ** 20:26. ຖ້ອຍຄຳຂອງສາດສະດາທີ່ພວກເຈົ້າຈະໄດ້ຮັບ, ກໍຄືກັນກັບວ່າ ມັນມາຈາກປາກຂອງເຮົາເອງ, **ຄພ** 21:4–6. ການເປີດເຜີຍ ແລະ ພຣະບັນຍັດສຳລັບສາດສະໜາຈັກມາເຖິງພຽງແຕ່ຜ່ານຜູ້ທີ່ຖືກແຕ່ງຕັ້ງໄວ້ເທົ່ານັ້ນ, **ຄພ** 43:1–7. ໜ້າທີ່ຂອງປະທານຄື ຄວບຄຸມທັງສາດສະໜາຈັກ ແລະ ເປັນເໝືອນດັ່ງໂມເຊ, ທີ່ຈະເປັນສາດສະດາ, **ຄພ** 107:91–92.

ພວກເຮົາເຊື່ອໃນສາດສະດາ, **ຫຼຊ** 1:6.

**ສາດສະດາຍິງ.** *ເບິ່ງ* ທຳນາຍ, ການທຳນາຍ, ຄຳທຳນາຍ *ນຳອີກ*

ຜູ້ຍິງທີ່ໄດ້ຮັບປະຈັກພະຍານເຖິງພຣະເຢຊູ ແລະ ຊື່ນຊົມກັບວິນຍານແຫ່ງການເປີດເຜີຍ. ສາດສະດາຍິງບໍ່ມີຖານະປະໂລຫິດ ຫລື ຂໍກະແຈຂອງມັນ. ເຖິງແມ່ນວ່າ ມີພຽງແຕ່ຜູ້ຍິງບໍ່ເທົ່າໃດຄົນເທົ່ານັ້ນ ຢູ່ໃນພຣະຄຳພີທີ່ຖືກເອີ້ນວ່າສາດສະດາຍິງ, ແຕ່ມີຫລາຍຄົນທຳນາຍ, ດັ່ງເຊັ່ນ ເຣເບກາ, ຮັນນາ, ເອລີຊາເບັດ, ແລະ ມາຣີ.

ມີຣິອາມ ໄດ້ ຖືກ ເອີ້ນ ວ່າ ສາດ ສະ ດາ ຍິງ, **ອພຍ** 15:20. ເດໂບຣາໄດ້ຖືກເອີ້ນວ່າສາດສະດາຍິງ, **ຜປ** 4:4. ຮຸນດາໄດ້ຖືກເອີ້ນວ່າສາດສະດາຍິງ, **2 ກສ** 22:14 (2 ຂຄ 34:22).

ອານາໄດ້ຖືກເອີ້ນວ່າສາດສະດາຍິງ, **ລກ** 2:36.

**ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ.** *ເບິ່ງ* ເຄື່ອງໝາຍ; ສາດສະໜາຈັກຂອງພຣະເຢຊູຄຣິດ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ *ນຳອີກ*

ຄຳສອນ ແລະ ວຽກງານຂອງສາດສະໜາຈັກໜຶ່ງຊຶ່ງສະແດງໃຫ້ເຫັນວ່າ ໄດ້ຮັບການຮັບຮູ້ຈາກພຣະເຈົ້າ ແລະ ເປັນວິທີທາງທີ່ພຣະຜູ້

ເປັນເຈົ້າໄດ້ສະຖາປະນາໃຫ້ລູກໆຂອງພຣະອົງເພື່ອຮັບຄວາມສົມບູນໃນພຣະພອນຂອງພຣະອົງ. ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງມີດັ່ງຕໍ່ໄປນີ້:

*ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບຝ່າຍພຣະເຈົ້າ:* ພຣະເຈົ້າໄດ້ສ້າງມະນຸດໃຫ້ມີຮູບລັກສະນະຄ້າຍຄືກັບພຣະອົງເອງ, **ປຖກ** 1:26–27. ພຣະຜູ້ເປັນເຈົ້າໄດ້ກ່າວກັບໂມເຊໜ້າຕໍ່ໜ້າ, **ອພຍ** 33:11.

ນີ້ແມ່ນຊີວິດນິລັນດອນ ຄືພວກເຂົາຮູ້ຈັກພຣະເຈົ້າພຣະບິດາ ແລະ ພຣະເຍຊູຄຣິດ, **ຢຮ** 17:3.

ພຣະບິດາ ແລະ ພຣະບຸດມີພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ, **ຄພ** 130:22–23.

ພຣະ ບິດາ ແລະ ພຣະ ບຸດ ໄດ້ປະກົດຕໍ່ໂຈເຊັບ ສະມິດ, **ຈສ—ປ** 1:15–20. ພວກເຮົາເຊື່ອໃນພຣະເຈົ້າ, ພຣະບິດາຜູ້ສະຖິດນິລັນດອນ, **ຫຼຊ** 1:1.

*ຫລັກທຳ ແລະ ພິທີການເບື້ອງຕົ້ນ:* ຖ້າຜູ້ໃດບໍ່ບັງເກີດຈາກນ້ຳ ແລະ ພຣະວິນຍານ, **ຢຮ** 3:3–5. ແຕ່ລະຄົນໃນພວກເຈົ້າຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ ແລະ ຮັບບັບຕິສະມາ, ໃນພຣະນາມຂອງພຣະເຍຊູຄຣິດ, **ກຈກ** 2:38. ຈາກນັ້ນພວກເພິ່ນໄດ້ວາງມືໃສ່ເທິງພວກເຂົາ, ແລະ ພວກເຂົາໄດ້ຮັບພຣະວິນຍານບໍລິສຸດ, **ກຈກ** 8:14–17. ກາຍເປັນລູກຂອງພຣະເຈົ້າໂດຍການມີສັດທາໃນພຣະເຍຊູຄຣິດ, **ຄລຕ** 3:26–27.

ຈົ່ງກັບໃຈ, ແລະ ຮັບບັບຕິສະມາໃນນາມຂອງພຣະບຸດທີ່ຮັກຂອງເຮົາ, **2 ນຟ** 31:11–21.

ຄົນທັງຫລາຍທີ່ເຊື່ອໄດ້ຮັບບັບຕິສະມາ ແລະ ໄດ້ຮັບພຣະວິນຍານບໍລິສຸດ ໂດຍການວາງມື, **ຄພ** 76:50–53.

ຖານະປະໂລຫິດທີ່ຖືກຕ້ອງຈຳເປັນຕໍ່ການໃຫ້ບັບຕິສະມາ ແລະ ມອບຂອງປະທານແຫ່ງພຣະວິນຍານບໍລິສຸດ, **ຈສ—ປ** 1:70–72. ຫລັກທຳ ແລະ ພິທີການເບື້ອງຕົ້ນຂອງພຣະກິດຕິຄຸນໄດ້ຖືກບອກໄວ້, **ຫຼຊ** 1:4.

*ການເປີດເຜີຍ:* ຊົນຊາດໃດທີ່ບໍ່ມີພຣະເຈົ້ານຳໜ້າກໍເປັນຊົນຊາດທີ່ຂາດວິໄນ, **ສພສ** 29:18. ພຣະຜູ້ເປັນເຈົ້າເປີດເຜີຍແຜນການຂອງພຣະອົງແກ່ສາດສະດາຂອງພຣະອົງ, **ອມ** 3:7.

ສາດສະໜາຈັກໄດ້ຖືກສ້າງຂຶ້ນເທິງຮາກຖານຂອງການເປີດເຜີຍ, **ມທ** 16:17–18 (ຄພ 33:13).

ວິບັດແກ່ຄົນທີ່ເວົ້າວ່າພຣະຜູ້ເປັນເຈົ້າບໍ່ກະທຳວຽກງານໂດຍການເປີດເຜີຍອີກແລ້ວ, **3 ນຟ** 29:6.

ການເປີດເຜີຍ ແລະ ພຣະບັນຍັດມາເຖິງໂດຍຜ່ານທາງຜູ້ທີ່ຖືກແຕ່ງຕັ້ງໄວ້ເທົ່ານັ້ນ, **ຄພ** 43:2–7.

ພວກເຮົາເຊື່ອທັງໝົດທີ່ພຣະເຈົ້າໄດ້ເປີດເຜີຍ, **ຫຼຊ** 1:9.

*ສາດສະດາ:* ສາດສະໜາຈັກໄດ້ຖືກສ້າງຂຶ້ນຢູ່ເທິງຮາກຖານຂອງອັກຄະສາວົກ ແລະ ສາດສະດາ, **ອຟຊ** 2:19–20. ອັກຄະສາວົກ ແລະ ສາດສະດາຈຳເປັນຕໍ່ສາດສະໜາຈັກ, **ອຟຊ** 4:11–16.

ໂຈເຊັບ ສະມິດ ໄດ້ຖືກເອີ້ນໃຫ້ເປັນຜູ້ພະຍາກອນ, ສາດສະດາ, ແລະ ອັກຄະສາວົກ, **ຄພ** 21:1–3.

ພວກເຮົາເຊື່ອໃນສາດສະດາ, **ຫຼຊ** 1:6.

*ສິດອຳນາດ:* ພຣະເຍຊູໄດ້ປະທານອຳນາດ ແລະ ສິດອຳນາດໃຫ້ແກ່ສາວົກຂອງພຣະອົງ, **ລກ** 9:1–2 (ຢຮ 15:16).

ນີໄຟ ລູກຊາຍຂອງຮີລາມັນ ໄດ້ຮັບສິດອຳນາດອັນຍິ່ງໃຫຍ່ຈາກພຣະເຈົ້າ, **ຮລມ** 11:18 (3 ນຟ 7:17).

ສາດສະດາໄດ້ຮັບພຣະບັນຍັດສຳລັບສາດສະໜາຈັກ, **ຄພ** 21:4–5. ບໍ່ມີຄົນໃດຄວນສັ່ງສອນພຣະກິດຕິຄຸນ ຫລື ເສີມສ້າງສາດສະໜາຈັກ ຍົກເວັ້ນແຕ່ເຂົາຈະໄດ້ຮັບການແຕ່ງຕັ້ງໂດຍຄົນໃດຄົນໜຶ່ງທີ່ມີສິດອຳນາດ, **ຄພ** 42:11. ແອວເດີຄວນສັ່ງສອນພຣະກິດຕິຄຸນ, ໂດຍກະທຳໃນສິດອຳນາດ, **ຄພ** 68:8.

ບຸກຄົນທີ່ສັ່ງສອນ ຫລື ປະຕິບັດແທນພຣະເຈົ້າ ຕ້ອງຖືກເອີ້ນຈາກພຣະເຈົ້າໂດຍຜູ້ມີສິດອຳນາດ, **ຫຼຊ** 1:5.

*ພຣະຄຳພີເພີ່ມເຕີມທີ່ຈະອອກມາ:* ກິ່ງງ່າຂອງຢູດາ ຈະ ຮ່ວມກັບກິ່ງງ່າຂອງ ໂຢເຊັບ, **ອຊກ** 37:15–20.

ການອອກມາຂອງພຣະຄຳພີຍຸກສຸດທ້າຍໄດ້ຖືກບອກໄວ້ລ່ວງໜ້າ, **1 ນຟ** 13:38–41.

ພວກເຮົາເຊື່ອວ່າ ພຣະເຈົ້າຈະເປີດເຜີຍເລື່ອງສຳຄັນ ແລະ ຍິ່ງໃຫຍ່ອີກຫລາຍເລື່ອງ, **ຫຼຊ** 1:9.

*ການຈັດຕັ້ງສາດສະໜາຈັກ:* ສາດສະໜາຈັກໄດ້ຖືກສ້າງຂຶ້ນຢູ່ເທິງຮາກຖານຂອງອັກຄະສາວົກ ແລະ ສາດສະດາ, **ອຟຊ** 2:19–20. ອັກຄະສາວົກ ແລະ ສາດສະດາຈຳເປັນຕໍ່ສາດສະໜາຈັກ, **ອຟຊ** 4:11–16. ພຣະຄຣິດເປັນປະມຸກຂອງສາດສະໜາຈັກ, **ອຟຊ** 5:23.

ສາດສະໜາຈັກຂອງພຣະຄຣິດຕ້ອງຖືກເອີ້ນຕາມພຣະນາມຂອງພຣະອົງ, **3 ນຟ** 27:8.

ພວກເຮົາເຊື່ອໃນການຈັດວາງລະບຽບງານຢ່າງດຽວກັນກັບທີ່ມີຢູ່ໃນສາດສະໜາຈັກສະໄໝບູຮານ, **ຫຼຊ** 1:6.

*ວຽກງານເຜີຍແຜ່:* ເຫດສະນັ້ນພວກເຈົ້າຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ, **ມທ** 28:19–20. ສາວົກເຈັດສິບໄດ້ຖືກເອີ້ນໃຫ້ໄປສັ່ງສອນພຣະກິດຕິຄຸນ, **ລກ** 10:1.

ພວກເຂົາປາດຖະໜາຈະປະກາດຄວາມລອດໃຫ້ແກ່ມະນຸດສະໂລກທັງໝົດ, **ມຊຢ** 28:3.

ພວກແອວເດີຕ້ອງອອກໄປສັ່ງສອນພຣະກິດຕິຄຸນຂອງເຮົາ, ເປັນຄູ່ໆ, **ຄພ** 42:6. ພຣະກິດຕິຄຸນຕ້ອງຖືກສັ່ງສອນໃຫ້ແກ່ມະນຸດສະໂລກທັງໝົດ, **ຄພ** 58:64.

*ຂອງປະທານທາງວິນຍານ:* ພວກເຂົາເລີ່ມປາກພາສາຕ່າງໆ, **ກຈກ** 2:4. ບັນດາເຖົ້າແກ່ຕ້ອງປິ່ນປົວຄົນເຈັບປ່ວຍ, **ຢກບ** 5:14.

ບໍ່ໃຫ້ປະຕິເສດຂອງປະທານຂອງພຣະເຈົ້າ, **ມຣນ** 10:8.

ຂອງປະທານທາງວິນຍານໄດ້ຖືກລະບຸໄວ້, **ຄພ** 46:13–26 (1 ກຣທ 12:1–11; ມຣນ 10:9–18).

*ພຣະວິຫານ:* ເຮົາຈະຕັ້ງພັນທະສັນຍາ ແລະ ຈະຕັ້ງພຣະວິຫານຢູ່ທ່າມກາງພວກເຂົາຕະຫລອດໄປ, **ອຊກ** 37:26–27. ພຣະຜູ້ເປັນເຈົ້າຈະມາຍັງພຣະວິຫານ ໃນທັນໃດ, **ມລກ** 3:1.

ນີໄຟໄດ້ສ້າງພຣະວິຫານ, **2 ນຟ** 5:16.

ໄພ່ພົນຂອງພຣະເຈົ້າຖືກຕິສອນສຳລັບຄວາມລົ້ມເຫລວທີ່ຈະສ້າງບ້ານຂອງພຣະຜູ້ເປັນເຈົ້າ, **ຄພ** 95 (ຄພ 88:119). ຜູ້ຄົນຂອງພຣະຜູ້ເປັນເຈົ້າຈະສ້າງພຣະວິຫານເພື່ອເຮັດພິທີການສັກສິດສະເໝີ, **ຄພ** 124:37–44. ການສ້າງພຣະວິຫານ ແລະ ການເຮັດພິທີການເປັນພາກສ່ວນໜຶ່ງໃນວຽກງານອັນຍິ່ງໃຫຍ່ໃນຍຸກສຸດທ້າຍ, **ຄພ** 138:53–54.

**ສາດສະໜາຈັກ, ຊື່ຂອງ.** *ເບິ່ງ* ສາດສະໜາຈັກຂອງພຣະເຢຊູຄຣິດ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ; ມໍມອນ *ນຳອີກ*

ໃນພຣະຄຳພີມໍມອນ, ເມື່ອພຣະເຢຊູຄຣິດໄດ້ສະເດັດມາຢ້ຽມຢາມຊາວນີໄຟທີ່ຊອບທຳບໍ່ດົນຫລັງຈາກການຟື້ນຄືນພຣະຊົນຂອງພຣະອົງ, ພຣະອົງໄດ້ກ່າວວ່າ ສາດສະໜາຈັກຂອງພຣະອົງຄວນມີຊື່ຕາມພຣະນາມຂອງພຣະອົງ (3 ນຟ 27:3–8). ໃນສະໄໝປະຈຸບັນພຣະຜູ້ເປັນເຈົ້າໄດ້ເປີດເຜີຍຊື່ຂອງສາດສະໜາຈັກວ່າເປັນ"ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ" (ຄພ 115:4).

**ສາດສະໜາຈັກຂອງພຣະເຢຊູຄຣິດ.** *ເບິ່ງ* ການຟື້ນຟູພຣະກິດຕິຄຸນ; ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ; ສາດສະໜາຈັກ, ຊື່ຂອງ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ; ໄພ່ພົນຂອງພຣະເຈົ້າ; ອານາຈັກຂອງພຣະເຈົ້າ ຫລື ອານາຈັກສະຫວັນ *ນຳອີກ*

ກຸ່ມໜຶ່ງຂອງຜູ້ທີ່ເຊື່ອ ຜູ້ໄດ້ຮັບເອົາພຣະນາມຂອງພຣະເຢຊູຄຣິດ ໂດຍການບັບຕິສະມາ ແລະ ການຢືນຢັນ. ສາດສະໜາຈັກທີ່ແທ້ຈິງຕ້ອງເປັນສາດສະໜາຈັກຂອງພຣະຜູ້ເປັນເຈົ້າ; ຕ້ອງມີສິດອຳນາດ, ຄຳສອນ, ກົດ,

ພິທີການ, ແລະ ພຣະນາມຂອງພຣະອົງ; ແລະ ຕ້ອງປົກຄອງໂດຍພຣະອົງຜ່ານຕົວແທນທີ່ໄດ້ຖືກແຕ່ງຕັ້ງໄວ້.

ພຣະຜູ້ເປັນເຈົ້າໄດ້ໂຜດໃຫ້ມີຄົນທີ່ເຊື່ອເພີ່ມຈຳນວນຂຶ້ນທຸກໆວັນ, **ກຈກ** 2:47. ພວກເຮົາທີ່ມີຫລາຍຄົນກໍຮ່ວມເຂົ້າເປັນຮ່າງກາຍດຽວກັນໃນພຣະຄຣິດ, **ຣມ** 12:5. ເຮົາທັງຫລາຍໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວ, **1 ກຣທ** 12:13. ສາດສະໜາຈັກໄດ້ຖືກສ້າງຂຶ້ນເທິງຮາກຖານຂອງອັກຄະສາວົກ ແລະ ສາດສະດາ, **ອຟຊ** 2:19–20. ອັກຄະສາວົກ ແລະ ສາດສະດາຈຳເປັນຕໍ່ສາດສະໜາຈັກ, **ອຟຊ** 4:11–16. ພຣະຄຣິດເປັນປະມຸກຂອງສາດສະໜາຈັກ, **ອຟຊ** 5:23.

ເຖິງແມ່ນວ່າມັນມີສາດສະໜາຈັກຫລາຍບ່ອນກໍຕາມ, ແຕ່ລະບ່ອນກໍເປັນສາດສະໜາຈັກດຽວກັນ, **ມຊຢ** 25:19–22. ສາດສະໜາຈັກໄດ້ຖືກຊຳລະໃຫ້ສະອາດ ແລະ ຖືກເຮັດໃຫ້ເປັນລະບຽບ, **ແອວ** 6:1–6. ສາດສະໜາຈັກຂອງພຣະຄຣິດ ຕ້ອງຖືກເອີ້ນຕາມພຣະນາມຂອງພຣະອົງ, **3 ນຟ** 27:8. ຄົນໃນສາດສະໜາຈັກໄດ້ຊຸມນຸມກັນຢູ່ເລື້ອຍໆ, ເພື່ອຖືສິນອົດເຂົ້າ ແລະ ເພື່ອອະທິຖານ ແລະ ເພື່ອສົນທະນາກັນ, **ມຣນ** 6:5.

ນີ້ແມ່ນສາດສະໜາຈັກທີ່ແທ້ຈິງ ແລະ ດຳລົງຢູ່ແຫ່ງດຽວເທົ່ານັ້ນ, **ຄພ** 1:30. ສາດສະໜາຈັກຂອງພຣະຄຣິດໄດ້ຖືກຈັດຕັ້ງຂຶ້ນໃນຍຸກສຸດທ້າຍນີ້, **ຄພ** 20:1. ພຣະຜູ້ເປັນເຈົ້າເອີ້ນຜູ້ຮັບໃຊ້ຂອງພຣະອົງໃຫ້ເສີມສ້າງສາດສະໜາຈັກຂອງພຣະອົງ, **ຄພ** 39:13. ເພາະສາດສະໜາຈັກຂອງເຮົາຈະຖືກເອີ້ນດັ່ງນັ້ນໃນຍຸກສຸດທ້າຍ, **ຄພ** 115:4.

**ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.** *ເບິ່ງ* ການຟື້ນຟູພຣະກິດຕິຄຸນ; ສາດສະໜາຈັກ, ເຄື່ອງໝາຍຂອງສາດສະໜາຈັກທີ່ແທ້ຈິງ; ສາດສະໜາຈັກ, ຊື່ຂອງ; ສາດສະໜາຈັກຂອງພຣະເຢຊູຄຣິດ *ນຳອີກ*

ຊື່ທີ່ຖືກມອບໃຫ້ແກ່ສາດສະໜາຈັກຂອງພຣະຄຣິດໃນຍຸກສຸດທ້າຍ ເພື່ອໃຫ້ມັນແຕກຕ່າງຈາກສາດສະໜາຈັກໃນຍຸກສະໄໝອື່ນໆ (ຄພ 115:3–4).

ພຣະຜູ້ເປັນເຈົ້າຈະຖອກເທຄວາມຮູ້ລົງມາເທິງຫົວຂອງໄພ່ພົນຍຸກສຸດທ້າຍ, **ຄພ** 121:33. ໂຈເຊັບ ສະມິດ ແມ່ນສາດສະດາ ແລະ ຜູ້ພະຍາກອນຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, **ຄພ** 127:12. ວັນອັນຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າໃກ້ຈະມາເຖິງແລ້ວສຳລັບໄພ່ພົນຍຸກສຸດທ້າຍ, **ຄພ** 128:21, 24. ໂຈເຊັບ ສະມິດ ໄດ້ຊ່ວຍເຕົ້າໂຮມໄພ່ພົນຍຸກສຸດທ້າຍ, **ຄພ** 135:3. ໄພ່ພົນຍຸກສຸດທ້າຍໄດ້ຖືກຈັດຕັ້ງເປັນກຸ່ມໆເພື່ອໃຫ້ເດີນທາງໄປຫາເຂດຕາເວັນຕົກຂອງສະຫະລັດອາເມຣິກາ, **ຄພ** 136:2. ກົດຂອງການແຕ່ງງານໄດ້ຖືກບົ່ງໄວ້ສຳລັບໄພ່ພົນຍຸກສຸດທ້າຍ, **ຂປ** 1. ຖານະປະໂລຫິດໄດ້ຖືກມອບໃຫ້ແກ່ສະມາຊິກຜູ້ຊາຍທຸກຄົນຂອງສາດສະໜາຈັກທີ່ມີຄ່າຄວນຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, **ຂປ** 2.

ເລື່ອງລາວຂອງພາບທີ່ມາໃຫ້ເຫັນຄັ້ງທຳອິດຕໍ່ໄພ່ພົນຍຸກສຸດທ້າຍທຸກຄົນ, **ຈສ—ປ** 1:1.

**ສາດສະໜາຈັກທີ່ຍິ່ງໃຫຍ່ ແລະ ໜ້າກຽດຊັງ.** *ເບິ່ງ* ມານ—ສາດສະໜາຈັກຂອງມານ

**ສາດສະໜາຈັກທີ່ໜ້າກຽດຊັງ.** *ເບິ່ງ* ມານ—ສາດສະໜາຈັກຂອງມານ

**ສານຂອງໂປໂລ.** *ເບິ່ງ* ໂປໂລ; ຊື່ຂອງສານແຕ່ລະສະບັບ *ນຳອີກ*

ໜັງສືສິບສີ່ເຫລັ້ມໃນພຣະຄຳພີໃໝ່ ຊຶ່ງຕົ້ນສະບັບເປັນສານທີ່ອັກຄະສາວົກໂປໂລໄດ້ສົ່ງໄປຫາສະມາຊິກຂອງສາດສະໜາຈັກ. ສານເຫລົ່ານີ້ຖືກແຍກເປັນຫລາຍກຸ່ມດັ່ງຕໍ່ໄປນີ້:

*1 ແລະ 2 ເທສະໂລນິກ (ຄ.ສ. 50–51)*

ໂປໂລໄດ້ຂຽນສານເຖິງຊາວເທສະໂລນິກຈາກໂກຣິນໂທລະຫວ່າງການໄປສອນສາດສະໜາເທື່ອທີສອງຂອງລາວ. ວຽກງານຂອງລາວຢູ່ເທສະໂລນິກໄດ້ຖືກບັນຍາຍໄວ້ ໃນກິດ

ຈະການ 17. ລາວຢາກກັບຄືນໄປ ເທສະໂລນີກ, ແຕ່ລາວກໍບໍ່ສາມາດເຮັດ (1 ທສນ 2:18). ສະນັ້ນລາວຈຶ່ງໄດ້ສົ່ງຕີໂມທຽວໄປໃຫ້ກຳລັງໃຈຜູ້ປ່ຽນໃຈເຫລື້ອມໃສ ແລະ ມາລາຍງານລາວກ່ຽວກັບຄວາມທຸກສຸກຂອງສະມາຊິກ. ສານສະບັບທຳອິດ ແມ່ນກ່ຽວກັບຄວາມຂອບພຣະໄທຂອງລາວສຳລັບການກັບຄືນມາຂອງຕີໂມທຽວ. ສານສະບັບທີສອງ ແມ່ນຖືກຂຽນບໍ່ດົນຫລັງຈາກນັ້ນ.

*1 ແລະ 2 ໂກຣິນໂທ, ຄາລາເຕຍ, ໂຣມ (ຄ.ສ. 55–57)*

ໂປໂລ ໄດ້ຂຽນ ສານເຖິງຊາວ ໂກຣິນໂທ ລະຫວ່າງການເດີນທາງໄປສອນສາດສະໜາເທື່ອທີສາມຂອງລາວ ເພື່ອຕອບຄຳຖາມ ແລະ ດັດແປງຄວາມບໍ່ເປັນລະບຽບໃນບັນດາໄພ່ພົນຂອງພຣະເຈົ້າຢູ່ໂກຣິນໂທ.

ສານເຖິງຊາວຄາລາເຕຍ ອາດຖືກຂຽນເຖິງໜ່ວຍສາດສະໜາຈັກຫລາຍແຫ່ງຕະຫລອດທົ່ວຄາລາເຕຍ. ສະມາຊິກບາງຈຳນວນຂອງສາດສະໜາຈັກໄດ້ປະຖິ້ມພຣະກິດຕິຄຸນໄປຕາມຄວາມເຫັນຊອບກົດໝາຍຂອງຊາວຢິວ. ໃນຈົດໝາຍສະບັບນີ້, ໂປໂລໄດ້ອະທິບາຍຈຸດປະສົງຂອງກົດຂອງໂມເຊ ແລະ ຄຸນຄ່າຂອງສາດສະໜາທີ່ເຊີດຊູທາງວິນຍານ.

ໂປໂລໄດ້ຂຽນສານເຖິງຊາວໂຣມຈາກເມືອງໂກຣິນໂທ, ໃນການຕຽມໄພ່ພົນຂອງພຣະເຈົ້າຊາວໂຣມ ສຳລັບການຢ້ຽມຢາມຂອງລາວ ທີ່ລາວຫວັງຈະໄປຫາພວກເຂົາ. ຈົດໝາຍສະບັບນີ້ກໍຍັງຢືນຢັນຄຳສອນ ທີ່ຊາວຢິວບາງຈຳນວນຜູ້ໄດ້ປ່ຽນໃຈເຫລື້ອມໃສເປັນຊາວຄຣິດສະຕຽນ ກຳລັງໂຕ້ຖຽງກັນຢູ່.

*ຟີລິບປອຍ, ໂກໂລຊາຍ, ເອເຟໂຊ, ຟີເລໂມນ, ເຮັບເຣີ (ຄ.ສ. 60–62)*

ໂປໂລໄດ້ຂຽນສານໃນຂະນະທີ່ລາວຢູ່ໃນຄຸກເທື່ອທຳອິດຢູ່ໃນກຸງໂຣມ.

ໂປໂລໄດ້ຂຽນສານເຖິງຊາວຟີລິບປອຍສ່ວນຫລາຍແລ້ວແມ່ນສະແດງຄວາມກະຕັນຍູ ແລະ ຄວາມຮັກແພງຂອງລາວຕໍ່ໄພ່ພົນຂອງພຣະເຈົ້າຊາວຟີລິບປອຍ ແລະ ໃຫ້ກຳລັງໃຈພວກເຂົາ ເນື່ອງດ້ວຍຄວາມຜິດຫວັງຂອງພວກເຂົາກັບການຕິດຄຸກຂອງລາວເປັນເວລາດົນນານ.

ໂປໂລ ໄດ້ຂຽນສານ ເຖິງຊາວ ໂກໂລຊາຍ ຕາມການລາຍງານທີ່ແຈ້ງບອກວ່າ ໄພ່ພົນຂອງພຣະເຈົ້າຊາວໂກໂລຊາຍ ກຳລັງເຮັດຄວາມຜິດທີ່ຮ້າຍແຮງ. ພວກເຂົາເຊື່ອວ່າ ຄວາມດີພ້ອມທຸກຢ່າງ ມາເຖິງໂດຍການຮັກສາພິທີການພາຍນອກຝ່າຍດຽວຢ່າງລະມັດລະວັງ ແທນທີ່ຈະພັດທະນາຄຸນລັກສະນະຂອງຕົນໃຫ້ເປັນເໝືອນດັ່ງພຣະຄຣິດ.

ສານເຖິງຊາວເອເຟໂຊເປັນສະບັບທີ່ສຳຄັນຫລາຍ, ເພາະວ່າມັນບັນຈຸຄຳສອນຂອງໂປໂລກ່ຽວກັບສາດສະໜາຈັກຂອງພຣະຄຣິດ.

ສານເຖິງຟີເລໂມນ ເປັນຈົດໝາຍສ່ວນຕົວກ່ຽວກັບໂອເນຊີໂມ ຂ້າທາດຜູ້ທີ່ໄດ້ຂະໂມຍຈາກເຈົ້ານາຍ, ຟີເລໂມນ, ແລະ ໄດ້ລັກໜີໄປກຸງໂຣມ. ໂປໂລໄດ້ສົ່ງໂອເນຊີໂມກັບຄືນໄປຫາເຈົ້ານາຍຂອງລາວ ພ້ອມດ້ວຍຈົດໝາຍຂໍໃຫ້ອະໄພໂທດໃຫ້ແກ່ໂອເນຊີໂມ.

ໂປໂລໄດ້ຂຽນສານເຖິງຊາວເຮັບເຣີ ເຖິງສະມາຊິກຂອງສາດສະໜາຈັກຊາວຢິວ ເພື່ອຊັກຊວນພວກເຂົາວ່າ ກົດຂອງໂມເຊໄດ້ສຳເລັດຄົບຖ້ວນແລ້ວໃນພຣະຄຣິດ ແລະ ວ່າກົດຂອງພຣະກິດຕິຄຸນຂອງພຣະຄຣິດໄດ້ມາແທນກົດຂອງໂມເຊແລ້ວ.

*1 ແລະ 2 ຕີໂມທຽວ, ຕີໂຕ (ຄ.ສ. 64–65)*

ໂປໂລໄດ້ຂຽນສານເຫລົ່ານີ້ຫລັງຈາກລາວໄດ້ຖືກປ່ອຍອອກຈາກຄຸກຢູ່ກຸງໂຣມເທື່ອທຳອິດ.

ໂປໂລ ໄດ້ເດີນທາງໄປເມືອງເອເຟໂຊ, ບ່ອນທີ່ລາວໄດ້ປະຕີໂມທຽວໄວ້ທີ່ນັ້ນ ເພື່ອຢຸດຢັ້ງການຂະຫຍາຍຕົວຂອງການຄາດຄະເນບາງຢ່າງ, ໂດຍທີ່ຕັ້ງໃຈຈະກັບຄືນມາ. ລາວໄດ້ຂຽນສານສະບັບທຳອິດເຖິງຕີໂມທຽວ, ບາງທີອາດຈາກເມືອງມາເກໂດເນຍ, ເພື່ອແນະນຳ ແລະ ຊຸກຍູ້ລາວໃນການບັນລຸພາລະກິດຂອງລາວ.

ໂປໂລ ໄດ້ຂຽນສານ ເຖິງຕີໂຕ ລະຫວ່າງ

ເວລາທີ່ລາວໄດ້ຖືກປ່ອຍອອກຈາກຄຸກ. ລາວອາດໄດ້ໄປຢ້ຽມຢາມກະເຣເຕ, ບ່ອນທີ່ຕີໂຕຮັບໃຊ້ຢູ່. ຈົດໝາຍສະບັບນີ້ ສ່ວນຫລາຍແລ້ວແມ່ນກ່ຽວກັບການດຳລົງຊີວິດທີ່ຊອບທຳ ແລະ ລະບຽບວິໄນ ພາຍໃນສາດສະໜາຈັກ.

ໂປໂລໄດ້ຂຽນສານສະບັບທີສອງເຖິງຕີໂມທຽວ ໃນຂະນະທີ່ຢູ່ໃນຄຸກເທື່ອທີສອງ, ບໍ່ດົນກ່ອນໂປໂລໄດ້ຖືກຂ້າຍ້ອນຄວາມເຊື່ອຂອງລາວ. ສານສະບັບນີ້ບັນຈຸຖ້ອຍຄຳສຸດທ້າຍຂອງໂປໂລ ແລະ ສະແດງເຖິງຄວາມກ້າຫານທີ່ຍອດຢ້ຽມ ແລະ ຄວາມໄວ້ວາງໃຈຂອງລາວຈົນເຖິງຂັ້ນທີ່ລາວໄດ້ຖືກຂ້າຕາຍ.

**ສານຸສິດ.** *ເບິ່ງ* ຊາວຄຣິດສະຕຽນ; ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ; ອັກຄະສາວົກ; ແອກ *ນຳອີກ*

ຜູ້ຕິດຕາມຂອງພຣະເຢຊູຄຣິດ ຜູ້ມີຊີວິດຕາມຄຳສອນຂອງພຣະຄຣິດ (ຄພ 41:5). ຄຳວ່າ *ສານຸສິດ* ໄດ້ຖືກໃຊ້ເພື່ອບັນຍາຍເຖິງອັກຄະສາວົກສິບສອງ ຜູ້ພຣະຄຣິດໄດ້ເອີ້ນໃນລະຫວ່າງການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະອົງ (ມທ 10:1–4). ຄຳວ່າ *ສານຸສິດ* ຍັງຖືກໃຊ້ເພື່ອບັນຍາຍເຖິງຜູ້ຊາຍສິບສອງຄົນທີ່ພຣະເຢຊູໄດ້ເລືອກທີ່ຈະນຳພາສາດສະໜາຈັກຂອງພຣະອົງໃນທ່າມກາງຊາວນີໄຟ ແລະ ຊາວເລມັນ (3 ນຟ 19:4).

ຈົ່ງຜະນຶກກົດໄວ້ໃນບັນດາສານຸສິດຂອງເຮົາ, **ອຊຢ** 8:16.

ຖ້າພວກເຈົ້າຕັ້ງໝັ້ນຢູ່ໃນຖ້ອຍຄຳຂອງເຮົາ, ພວກເຈົ້າກໍເປັນສານຸສິດຂອງເຮົາ, **ຢຮ** 8:31.

ມໍມອນເປັນສານຸສິດຂອງພຣະເຢຊູຄຣິດ, **3 ນຟ** 5:12–13. ພວກທ່ານເປັນສານຸສິດຂອງເຮົາ, **3 ນຟ** 15:12. ສານຸສິດສາມຄົນຈະບໍ່ໄດ້ຊີມລົດຊາດຂອງຄວາມຕາຍ, **3 ນຟ** 28:4–10.

ສຽງເຕືອນຈະມາເຖິງໂດຍປາກຂອງສານຸສິດຂອງເຮົາ, **ຄພ** 1:4. ສານຸສິດຂອງເຮົາຈະຢືນຢູ່ໃນສະຖານທີ່ສັກສິດ, **ຄພ** 45:32. ຜູ້ທີ່ບໍ່ຈື່ຈຳຄົນຍາກຈົນ, ຄົນຂັດສົນ, ຄົນເຈັບປ່ວຍ ແລະ ຄົນທີ່ເປັນທຸກ ບໍ່ໄດ້ເປັນສານຸສິດຂອງເຮົາ, **ຄພ** 52:40. ຄົນໃດກໍຕາມທີ່ບໍ່ເຕັມໃຈທີ່ຈະມອບຊີວິດຂອງຕົນ ບໍ່ໄດ້ເປັນສານຸສິດຂອງເຮົາ, **ຄພ** 103:27–28.

**ສານຸສິດຊາວນີໄຟ.** *ເບິ່ງ* ສານຸສິດຊາວນີໄຟສາມຄົນ

**ສານຸສິດຊາວນີໄຟສາມຄົນ.** *ເບິ່ງ* ສານຸສິດ; ຊາວນີໄຟ; ບຸກຄົນທີ່ຖືກປ່ຽນສະພາບແລ້ວ *ນຳອີກ*

ສານຸສິດຊາວນີໄຟສາມຄົນທີ່ພຣະຄຣິດໄດ້ເລືອກໄວ້ ຊຶ່ງກ່າວເຖິງໃນພຣະຄຳພີມໍມອນ.

ພຣະຜູ້ເປັນເຈົ້າໄດ້ປະທານພອນອັນດຽວກັນ ທີ່ໄດ້ປະທານໃຫ້ແກ່ໂຢຮັນຜູ້ເປັນທີ່ຮັກໃຫ້ແກ່ສານຸສິດສາມຄົນ—ເພື່ອວ່າເຂົາເຈົ້າຈະໄດ້ຢູ່ເທິງແຜ່ນດິນໂລກ ເພື່ອນຳຈິດວິນຍານມາສູ່ພຣະຄຣິດ ຈົນກວ່າພຣະຜູ້ເປັນເຈົ້າຈະສະເດັດມາອີກ. ເຂົາເຈົ້າໄດ້ປ່ຽນສະພາບ ເພື່ອວ່າເຂົາເຈົ້າຈະບໍ່ຮູ້ສຶກເຈັບປວດ ແລະ ບໍ່ຕາຍ (3 ນຟ 28).

ພຣະຄຣິດໄດ້ຍອມເຮັດຕາມຄວາມປາດຖະໜາຂອງສານຸສິດສາມຄົນ ທີ່ຈະມີຊີວິດຢູ່ຕໍ່ໄປ ຈົນກວ່າພຣະອົງຈະສະເດັດມາອີກ, **3 ນຟ** 28:1–9. ເຂົາເຈົ້າຈະບໍ່ເຄີຍຮັບທຸກເວດທະນາດ້ວຍຄວາມເຈັບປວດຂອງຄວາມຕາຍ ຫລື ຄວາມໂສກເສົ້າ, **3 ນຟ** 28:7–9. ເຂົາເຈົ້າຈະເຕັມໄປດ້ວຍຄວາມສົມບູນແຫ່ງຄວາມຊື່ນຊົມ, **3 ນຟ** 28:10. ພວກເພິ່ນໄດ້ຖືກພາຂຶ້ນໄປສະຫວັນຊົ່ວໄລຍະໜຶ່ງ, **3 ນຟ** 28:13–17. ພວກເພິ່ນໄດ້ອອກໄປປະຕິບັດສາດສະໜາກິດແກ່ຜູ້ຄົນ ແລະ ໄດ້ທົນກັບການຂົ່ມເຫັງ, **3 ນຟ** 28:18–23. ພວກເພິ່ນໄດ້ປະຕິບັດສາດສະໜາກິດແກ່ມໍມອນ, **3 ນຟ** 28:24–26 (ມມ 8:10–11). ເຂົາເຈົ້າຈະປະຕິບັດສາດສະໜາກິດແກ່ຊາວຕ່າງຊາດ, ຊາວຢິວ, ເຜົ່າທີ່ແຕກກະຈັດກະຈາຍກັນໄປ, ແລະ ບັນດາປະຊາຊາດທັງປວງ, **3 ນຟ** 28:27–29. ຊາຕານບໍ່ມີອຳນາດເໜືອກວ່າພວກເພິ່ນ, **3 ນຟ** 28:39.

**ສາບານ.** *ເບິ່ງ* ຄຳສາບານ; ຄຳຫຍາບຄາຍ; ໝິ່ນປະໝາດ, ການໝິ່ນປະໝາດ

**ສາບແຊ່ງ, ຄຳສາບແຊ່ງ.** *ເບິ່ງ* ຄຳຫຍາບຄາຍ; ອັບປະໂຫຍດ, ຄວາມອັບປະໂຫຍດ *ນຳອີກ*

ໃນພຣະຄຳພີ, ຄຳສາບແຊ່ງໄດ້ຖືກນຳເອົາມາໃຊ້ຢູ່ໃນກົດແຫ່ງສະຫວັນ ເພື່ອອະນຸຍາດ ຫລື ນຳການພິພາກສາ ແລະ ຜົນສະທ້ອນມາໃຫ້ບາງສິ່ງ, ບາງຄົນ, ແລະ ຜູ້ຄົນໂດຍສະເພາະ ເນື່ອງດ້ວຍຄວາມບໍ່ຊອບທຳ. ຄຳສາບແຊ່ງເປັນການສະແດງໃຫ້ປະຈັກເຖິງຄວາມຮັກ ແລະ ຄວາມຍຸດຕິທຳຂອງພຣະເຈົ້າ. ມັນອາດຈະຖືກດຳເນີນການໂດຍພຣະເຈົ້າໂດຍກົງ ຫລື ປະກາດໂດຍຜູ້ຮັບໃຊ້ທີ່ມີສິດອຳນາດຂອງພຣະອົງ. ບາງເທື່ອ, ເຫດຜົນແທ້ໆສຳລັບຄຳສາບແຊ່ງພຽງແຕ່ພຣະເຈົ້າເທົ່ານັ້ນທີ່ຮູ້ຈັກ. ນອກເໜືອຈາກນັ້ນ, ສະພາບຢູ່ໃນການສາບແຊ່ງຕົກຢູ່ທີ່ຜູ້ຕັ້ງໃຈບໍ່ເຊື່ອຟັງພຣະເຈົ້າ ແລະ ແຍກຕົນເອງອອກຈາກພຣະວິນຍານຂອງພຣະຜູ້ເປັນເຈົ້າ.

ພຣະຜູ້ເປັນເຈົ້າອາດເອົາຄຳສາບແຊ່ງໄປເພາະສັດທາຂອງບຸກຄົນ ຫລື ຜູ້ຄົນໃນພຣະເຢຊູຄຣິດ ແລະ ການເຊື່ອຟັງກົດ ແລະ ພິທີການຂອງພຣະກິດຕິຄຸນ (ແອວ 23:16–18; 3 ນຟ 2:14–16; ຫຼຊ 1:3).

ພຣະເຈົ້າໄດ້ສາບແຊ່ງງູເພາະການລໍ້ລວງອາດາມ ແລະ ເອວາ, **ປຖກ** 3:13–15 (ມຊ 4:19–21). ແຜ່ນດິນໄດ້ຖືກສາບແຊ່ງເພາະເຫັນແກ່ອາດາມ ແລະ ເອວາ, **ປຖກ** 3:17–19 (ມຊ 4:23–25). ພຣະຜູ້ເປັນເຈົ້າໄດ້ສາບແຊ່ງກາອິນເພາະການຂ້າອາເບັນ, **ປຖກ** 4:11–16 (ມຊ 5:22–41). ພຣະຜູ້ເປັນເຈົ້າໄດ້ສາບແຊ່ງການາອານ ແລະ ລູກຫລານຂອງລາວ, **ປຖກ** 9:25–27 (ມຊ 7:6–8; ອຣຮ 1:21–27). ອິດສະຣາເອນຈະໄດ້ຮັບພອນຖ້າຫາກເຊື່ອຟັງຕໍ່ພຣະເຈົ້າ, ແລະ ຈະຖືກສາບແຊ່ງຖ້າຫາກບໍ່ເຊື່ອຟັງ, **ພບຍ** 28 (ພບຍ 29:18–28). ເກຮາສີ ແລະ ລູກຫລານຂອງລາວກໍໄດ້ຖືກສາບແຊ່ງດ້ວຍພະຍາດຂີ້ທູດຂອງນາອາມານ, **2 ກສ** 5:20–27. ພຣະຜູ້ເປັນເຈົ້າໄດ້ສາບແຊ່ງປະຊາຊາດອິດສະຣາເອນໃນສະໄໝບູຮານເພາະການບໍ່ຈ່າຍເງິນສ່ວນສິບ ແລະ ການບໍລິຈາກຕ່າງໆ, **ມລກ** 3:6–10.

ພຣະເຢຊູໄດ້ສາບແຊ່ງຕົ້ນໝາກເດື່ອ ແລະ ມັນໄດ້ຕາຍໄປ, **ມຣກ** 11:11–14, 20–21. ພຣະເຢຊູໄດ້ສາບແຊ່ງເມືອງໂຂຣາຊິນ, ເມືອງເບັດຊາອີດາ, ແລະ ເມືອງກາເປນາອູມ, **ລກ** 10:10–15.

ເພາະຊາວເລມັນບໍ່ຟັງພຣະຜູ້ເປັນເຈົ້າ, ພວກເຂົາຈຶ່ງຖືກແຍກອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ ແລະ ຖືກສາບແຊ່ງ, **2 ນຟ** 5:20–24. ທຸກຄົນໄດ້ຖືກເຊື້ອເຊີນໃຫ້ມາຫາພຣະເຈົ້າ, **2 ນຟ** 26:33. ພຣະເຈົ້າຈະສາບແຊ່ງຄົນທີ່ທຳການໂສເພນີ, **ຢຄ** 2:31–33. ຊາວນີໄຟຕ້ອງຖືກສາບແຊ່ງຫລາຍກວ່າຊາວເລມັນຍົກເວັ້ນແຕ່ພວກເຂົາຈະກັບໃຈ, **ຢຄ** 3:3–5. ຜູ້ຄົນທີ່ກະບົດນຳຄຳສາບແຊ່ງມາສູ່ຕົນເອງ, **ແອວ** 3:18–19 (ພບຍ 11:26–28). ໂຄຣິຫໍໄດ້ຖືກສາບແຊ່ງເພາະການນຳພາຜູ້ຄົນໄປຈາກພຣະເຈົ້າ, **ແອວ** 30:43–60. ພຣະຜູ້ເປັນເຈົ້າໄດ້ສາບແຊ່ງແຜ່ນດິນ ແລະ ຄວາມຮັ່ງມີຂອງຊາວນີໄຟ ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ, **ຮລມ** 13:22–23 (2 ນຟ 1:7; ແອວ 37:31). ພຣະຜູ້ເປັນເຈົ້າໄດ້ສາບແຊ່ງຊາວຢາເຣັດທີ່ຊົ່ວຮ້າຍ, **ອທ** 9:28–35. ການຊົດໃຊ້ຂອງພຣະຄຣິດໄດ້ຍົກເອົາການສາບແຊ່ງຂອງອາດາມໄປຈາກເດັກນ້ອຍໆ, **ມຣນ** 8:8–12.

ຜູ້ທີ່ຫັນໜີຈາກພຣະຜູ້ເປັນເຈົ້າຖືກສາບແຊ່ງ, **ຄພ** 41:1. ແຜ່ນດິນໂລກຈະຖືກທຳລາຍດ້ວຍຄຳສາບແຊ່ງ ຍົກເວັ້ນແຕ່ຈະມີບ້ວງບາງຊະນິດ ເພື່ອເຊື່ອມບັນພະບຸລຸດໃສ່ກັບລູກຫລານ, **ຄພ** 128:18 (ມລກ 4:5–6).

*ຄຳຫຍາບຄາຍ:* ການສາບແຊ່ງກໍຍັງໃຊ້ພາສາທີ່ຫຍາບຄາຍ, ໝິ່ນປະໝາດ, ຫລື ດູຖູກ.

ຜູ້ຄົນບໍ່ຄວນສາບແຊ່ງພໍ່ ຫລື ແມ່ຂອງຕົນ, **ອພຍ** 21:17 (ມທ 15:4). ຢ່າສາບແຊ່ງຜູ້ນຳຊົນຊາດຂອງພວກເຈົ້າ, **ອພຍ** 22:28 (ປຍຈ 10:20). ຊາຍ ແລະ ຍິງບໍ່ຄວນສາບແຊ່ງພຣະເຈົ້າ, **ລລວ** 24:13–16.

ເປໂຕໄດ້ສາບແຊ່ງຕອນລາວປະຕິເສດວ່າບໍ່ຮູ້ຈັກພຣະເຢຊູ, **ມທ** 26:69–74.

ຊາວນີໄຟທີ່ຊົ່ວຮ້າຍໄດ້ສາບແຊ່ງພຣະເຈົ້າ ແລະ ຢາກຕາຍ, **ມມ** 2:14.

**ສາລະພາບ, ການສາລະພາບ.** *ເບິ່ງ* ກັບໃຈ, ການກັບໃຈ; ອະໄພ, ໃຫ້ອະໄພ *ນຳອີກ*

ພຣະຄຳພີໃຊ້ການສາລະພາບຢ່າງໜ້ອຍໃນສອງວິທີທາງ. ໃນຄວາມໝາຍໜຶ່ງ, ການສາລະພາບຄືການກ່າວເຖິງສັດທາຂອງບາງຄົນໃນບາງສິ່ງ, ດັ່ງເຊັ່ນການສາລະພາບວ່າພຣະເຢຊູຄືພຣະຄຣິດ (ມທ 10:32; ຣມ 10:9; 1 ຢຮ 4:1–3; ຄພ 88:104).

ໃນຄວາມໝາຍໜຶ່ງອີກ, ການສາລະພາບຄືການຍອມຮັບຄວາມຜິດ, ດັ່ງເຊັ່ນໃນການສາລະພາບບາບ. ມັນແມ່ນໜ້າທີ່ຂອງທຸກຄົນທີ່ຈະສາລະພາບບາບທັງໝົດຂອງພວກເຂົາຕໍ່ພຣະຜູ້ເປັນເຈົ້າ ແລະ ຮັບເອົາການໃຫ້ອະໄພຈາກພຣະອົງ (ຄພ 58:42–43). ເມື່ອຈຳເປັນ, ຄວນສາລະພາບບາບຕໍ່ຄົນທີ່ເຮົາໄດ້ເຮັດບາບຕໍ່. ຄວນສາລະພາບບາບທີ່ຮ້າຍແຮງຕໍ່ເຈົ້າໜ້າທີ່ຂອງສາດສະໜາຈັກ (ໃນຫລາຍໆກໍລະນີນັ້ນຈະເປັນ ອະທິການ).

ລາວຕ້ອງສະລະພາບບາບຂອງຕົນ, **ລລວ** 5:5. ພວກເຂົາຈະສາລະພາບຄວາມຊົ່ວຮ້າຍຂອງພວກເຂົາ, **ລລວ** 26:40–42. ຂໍໃຫ້ເຈົ້າເວົ້າຄວາມຈິງຕໍ່ໜ້າອົງພຣະຜູ້ເປັນເຈົ້າຂອງອິດສະຣາເອນ ແລະ ສາລະພາບຜິດສາ, **ຢຊ** 7:19.

ຜູ້ຄົນໄດ້ຮັບບັບຕິສະມາຈາກລາວໃນແມ່ນ້ຳຈໍແດນ, ສາລະພາບບາບກຳຂອງຕົນ, **ມທ** 3:5–6.

ຜູ້ລ່ວງລະເມີດທີ່ສາລະພາບບາບຂອງຕົນຈະໄດ້ຮັບການໃຫ້ອະໄພ, **ມຊຢ** 26:29.

ສາລະພາບບາບຂອງເຈົ້າ, ຖ້າບໍ່ດັ່ງນັ້ນເຈົ້າຈະໄດ້ທົນກັບການລົງໂທດ, **ຄພ** 19:20. ຄົນທີ່ກັບໃຈຈະສາລະພາບ ແລະ ປະຖິ້ມບາບຂອງຕົນ, **ຄພ** 58:43. ພຣະຜູ້ເປັນເຈົ້າມີເມດຕາແກ່ຜູ້ສາລະພາບບາບດ້ວຍຫົວໃຈທີ່ຖ່ອມ, **ຄພ** 61:2. ພຣະຜູ້ເປັນເຈົ້າອະໄພບາບໃຫ້ແກ່ຜູ້ສາລະພາບບາບ ແລະ ທູນຂໍການໃຫ້ອະໄພ, **ຄພ** 64:7.

**ສາວົກເຈັດສິບ.** *ເບິ່ງ* ຖານະປະໂລຫິດແຫ່ງເມນຄີເສເດັກ; ອັກຄະສາວົກ *ນຳອີກ*

ຕຳແໜ່ງທີ່ພວກຜູ້ຊາຍໄດ້ຮັບແຕ່ງຕັ້ງ ໃນຖານະປະໂລຫິດແຫ່ງເມນຄີເສເດັກ. ປະຈຸບັນນີ້, ກຸ່ມສາວົກເຈັດສິບ ແມ່ນຮ່ວມດ້ວຍເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ ແລະ ສາວົກເຈັດສິບປະຈຳເຂດ. ສາວົກເຈັດສິບຮັບໃຊ້ໃນພຣະນາມຂອງພຣະຜູ້ເປັນເຈົ້າ ພາຍໃຕ້ການຊີ້ນຳຂອງຝ່າຍປະທານສູງສຸດ ແລະ ກຸ່ມອັກຄະສາວົກສິບສອງ (ເບິ່ງ ຄພ 107:34). ພວກເພິ່ນອຸທິດເວລາທັງໝົດຂອງຕົນ ເພື່ອປະຕິບັດສາດສະໜາກິດ.

ພຣະຜູ້ເປັນເຈົ້າໄດ້ເລືອກເອົາເຈັດສິບຄົນ, **ລກ** 10:1.

ສາວົກເຈັດສິບຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນ ແລະ ເປັນພະຍານພິເສດເຖິງພຣະເຢຊູຄຣິດ, **ຄພ** 107:25–26. ສາວົກເຈັດສິບຕ້ອງກະທຳໃນພຣະນາມຂອງພຣະຜູ້ເປັນເຈົ້າ, ພາຍໃຕ້ການຊີ້ນຳຂອງອັກຄະສາວົກສິບສອງໃນການເສີມສ້າງສາດສະໜາຈັກ ແລະ ຄວບຄຸມທຸລະກິດທັງໝົດຂອງສາດສະໜາຈັກ ໃນປະຊາຊາດທັງປວງ, **ຄພ** 107:34. ໃຫ້ເລືອກເອົາສາວົກເຈັດສິບຄົນອື່ນໆອີກ, ຈົນກວ່າມີເຈັດຄູນເຈັດສິບ, ຖ້າຫາກວຽກງານຮຽກຮ້ອງຕ້ອງການ, **ຄພ** 107:93–97. ກຸ່ມສາວົກເຈັດສິບໄດ້ຖືກຈັດຕັ້ງຂຶ້ນ ເພື່ອກຸ່ມແອວເດີທີ່ເຄື່ອນທີ່ ເພື່ອເປັນພະຍານເຖິງນາມຂອງເຮົາ ໃນທົ່ວໂລກ, **ຄພ** 124:138–139.

**ສິດທິຂອງອ້າຍກົກ.** *ເບິ່ງ* ພັນທະສັນຍາ; ລູກກົກ *ນຳອີກ*

ສິດທິຂອງການໄດ້ຮັບມູນມໍລະດົກທີ່ເປັນຂອງອ້າຍກົກ. ໃນຄວາມໝາຍທີ່ແຈ່ມແຈ້ງ, ສິດທິຂອງອ້າຍກົກ ແມ່ນລວມທັງສິດທິໃດໆ ຫລື ສິດທິທັງໝົດ ຫລື ມູນມໍລະດົກທັງໝົດ ທີ່ສົ່ງຕໍ່ໃຫ້ບຸກຄົນໃດໜຶ່ງ ເມື່ອເຂົາໄດ້ເກີດມາໃນຄອບຄົວ ແລະ ຕະກຸນ.

ໃຫ້ຂາຍສິດທິຂອງອ້າຍກົກໃຫ້ຂ້ອຍໃນມື້ນີ້, **ປຖກ** 25:29–34 (ປຖກ 27:36). ລູກກົກນັ່ງລຽນຕາມສິດທິຂອງອ້າຍກົກ, **ປຖກ** 43:33.

ເພິ່ນ ໄດ້ ມອບ ພອນ ໃຫ້ ເອຟະ ຣາອິມ ກ່ອນ ມາ ນາເຊ, **ປຖກ** 48:14–20 (ຍມຢ 31:9). ສິດທິ ຂອງອ້າຍກົກເປັນຂອງໂຢເຊັບ, **1 ຂຄ** 5:2.

ເອຊາວໄດ້ຂາຍສິດທິອ້າຍກົກຂອງລາວໄປ, **ຮຣ** 12:16.

ພວກ ເຈົ້າ ເປັນ ທາຍາດທີ່ຖືກຕ້ອງຕາມກົດ ໝາຍ, **ຄພ** 86:9. ຊີໂອນມີສິດທິຂອງຖານະປະ ໂລຫິດໂດຍທາຍາດ, **ຄພ** 113:8 (ອຣຣ 2:9–11).

**ສິດອຳນາດ.** *ເບິ່ງ* ຂໍກະແຈຂອງຖານະປະໂລ ຫິດ; ແຕ່ງຕັ້ງ, ການແຕ່ງຕັ້ງ; ຖານະປະໂລ ຫິດ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະ ເຈົ້າ, ຕຳແໜ່ງ; ອຳນາດ *ນຳອີກ*

ມະນຸດຢູ່ເທິງແຜ່ນດິນໂລກທີ່ຖືກເອີ້ນ ຫລື ໄດ້ຮັບການແຕ່ງຕັ້ງ ໄດ້ຮັບອະນຸຍາດໃຫ້ກະ ທຳແທນ ແລະ ເພື່ອພຣະເຈົ້າພຣະບິດາ ຫລື ພຣະເຢຊູຄຣິດ ໃນການເຮັດວຽກງານຂອງ ພຣະເຈົ້າ.

ເຮົາ ໄດ້ ສົ່ງ ເຈົ້າ ໄປ, **ອພຍ** 3:12–15. ກ່າວ ທຸກໆສິ່ງທີ່ເຮົາສັ່ງເຈົ້າ, **ອພຍ** 7:2.

ພຣະອົງໄດ້ປະທານອຳນາດໃຫ້ແກ່ສານຸສິດ ສິບສອງຄົນ, **ມທ** 10:1. ບໍ່ແມ່ນເຈົ້າທັງຫລາຍ ໄດ້ເລືອກເອົາເຮົາ, ແຕ່ຝ່າຍເຮົາໄດ້ເລືອກເອົາ ພວກເຈົ້າ, ແລະ ແຕ່ງຕັ້ງເຈົ້າທັງຫລາຍ, **ຢຮ** 15:16.

ນີໄຟກັບລີໄຮໄດ້ສັ່ງສອນດ້ວຍສິດອຳນາດ ອັນຍິ່ງໃຫຍ່, **ຮລມ** 5:18. ນີໄຟ, ລູກຊາຍຂອງ ຮີລາມັນ, ເປັນຄົນຂອງພຣະເຈົ້າ, ໂດຍທີ່ໄດ້ ຮັບອຳນາດ ແລະ ສິດອຳນາດອັນຍິ່ງໃຫຍ່ຈາກ ພຣະເຈົ້າ, **ຮລມ** 11:18 (3 ນຟ 7:17). ພຣະ ເຢຊູໄດ້ມອບອຳນາດ ແລະ ສິດອຳນາດໃຫ້ແກ່ ອັກຄະສາວົກສິບສອງຊາວນີໄຟ, **3 ນຟ** 12:1–2.

ໂຈເຊັບ ສະມິດ ໄດ້ຖືກເອີ້ນໂດຍພຣະເຈົ້າ, ແລະ ຖືກ ແຕ່ງຕັ້ງ, **ຄພ** 20:2. ບໍ່ມີຄົນໃດຈະ ສັ່ງສອນພຣະກິດຕິຄຸນ ຫລື ເສີມສ້າງສາດສະ ໜາຈັກຂອງເຮົາຂຶ້ນ ຍົກເວັ້ນແຕ່ເຂົາຈະໄດ້ຮັບ ການແຕ່ງຕັ້ງ ແລະ ເປັນທີ່ຮູ້ຈັກຕໍ່ສາດສະໜາ ຈັກວ່າເຂົາມີສິດອຳນາດ, **ຄພ** 42:11. ພວກ ແອວເດີຕ້ອງສັ່ງສອນພຣະກິດຕິຄຸນ, ໂດຍກະ ທຳໃນສິດອຳນາດ, **ຄພ** 68:8. ຖານະປະໂລ ຫິດແຫ່ງເມນຄິເສເດັກມີສິດອຳນາດ ເພື່ອປະ ຕິບັດໃນເລື່ອງທາງວິນຍານ, **ຄພ** 107:8, 18–19. ອັນໃດກໍຕາມທີ່ເຮັດໄປໃນສິດອຳນາດອັນ ສັກສິດ ຈະກາຍເປັນກົດ, **ຄພ** 128:9.

ບຸກຄົນທີ່ສັ່ງສອນ ຫລື ປະຕິບັດແທນພຣະ ເຈົ້າ ຕ້ອງຖືກເອີ້ນຈາກພຣະເຈົ້າໂດຍຜູ້ມີສິດ ອຳນາດ, **ຫຼຊ** 1:5.

**ສິນທຳ.** *ເບິ່ງ* ການຂາດສິນທຳທາງເພດ; ການລ່ວງປະເວນີ; ພົມມະຈັນ; ຫລິ້ນຊູ້

**ສິນມະຫາສະນິດ.** *ເບິ່ງ* ສິນລະລຶກ

**ສິນລະລຶກ.** *ເບິ່ງ* ເຂົ້າແລງຄາບສຸດທ້າຍ; ເສຍສະລະ, ການເສຍສະລະ; ຊົດໃຊ້, ການຊົດໃຊ້; ນ້ຳທີ່ປະກອບດ້ວຍຊີວິດ; ບັບຕິສະມາ, ໃຫ້ບັບຕິສະມາ; ພຣະເຢຊູ ຄຣິດ; ໄມ້ກາງແຂນ; ອາຫານທິບແຫ່ງຊີ ວິດ *ນຳອີກ*

ສຳ ລັບ ໄພ່ ພົນ ຍຸກ ສຸດ ທ້າຍ, ສິນ ລະ ລຶກ ໝາຍ ເຖິງພິທີຂອງການຮັບສ່ວນເຂົ້າຈີ່ ແລະ ນ້ຳ ໃນການລະນຶກເຖິງການເສຍສະລະຊົດ ໃຊ້ຂອງພຣະຄຣິດ. ເຂົ້າຈີ່ເປັນຕ່ອນໆ ເປັນ ຕົວແທນໃຫ້ແກ່ເນື້ອກາຍທີ່ສີກຂາດ; ນ້ຳເປັນ ຕົວແທນໃຫ້ແກ່ໂລຫິດທີ່ພຣະອົງໄດ້ຫລັ່ງເພື່ອ ຊົດໃຊ້ແທນບາບຂອງເຮົາ (1 ກຣທ 11:23–25; ຄພ 27:2). ເມື່ອສະມາຊິກທີ່ມີຄຸນຄ່າຂອງ ສາດສະໜາຈັກຮັບສ່ວນສິນລະລຶກ, ເຂົາເຈົ້າ ສັນຍາທີ່ຈະຮັບເອົາ ພຣະນາມຂອງຂອງພຣະ ຄຣິດໄວ້ກັບຕົນ, ທີ່ຈະລະນຶກເຖິງພຣະອົງ ຕະຫລອດເວລາ, ແລະ ທີ່ຈະຮັກສາພຣະບັນ ຍັດຂອງພຣະອົງ. ຜ່ານພິທີການນີ້, ສະມາຊິກ ຂອງສາດສະໜາຈັກຕໍ່ພັນທະສັນຍາແຫ່ງການ ບັບຕິສະມາຂອງເຂົາເຈົ້າ.

ໃນ ລະຫວ່າງ ການ ກິນ ເຂົ້າແລງຄາບສຸດ ທ້າຍ, ພຣະເຢຊູໄດ້ອະທິບາຍກ່ຽວກັບພິທີສິນ ລະລຶກ ໃນຂະນະທີ່ພຣະອົງກິນເຂົ້າແລງກັບ ອັກຄະສາວົກສິບສອງ (ມທ 26:17–28; ລູກາ 22:1–20).

ພຣະເຢຊູໄດ້ຈັບເອົາເຂົ້າຈີ່ຂຶ້ນມາ, ແລະ ຂອບພຣະຄຸນ; ແລະ ພຣະອົງກໍຈັບເອົາຈອກຂຶ້ນມາ, ແລະ ຂອບພຣະຄຸນ, **ມທ** 26:26–28 (ມຣກ 14:22–24; ລກ 22:19–20). ຜູ້ທີ່ກິນເນື້ອກາຍຂອງເຮົາ, ແລະ ດື່ມເລືອດຂອງເຮົາ, ກໍມີຊີວິດນິລັນດອນ, **ຢຮ** 6:54. ຜູ້ກິນ ແລະ ດື່ມໂດຍບໍ່ໄດ້ສັງເກດເຖິງພຣະກາຍ ກໍກິນ ແລະ ດື່ມເປັນເຫດໃຫ້ຕົນຖືກພິພາກສາລົງໂທດ, **1 ກຣທ** 11:29 (3 ນຟ 18:29).

ພຣະເຢຊູໄດ້ສອນສານຸສິດຊາວນີໄຟສິບສອງຄົນຂອງພຣະອົງກ່ຽວກັບສິນລະລຶກ, **3 ນຟ** 18:1–11. ພຣະເຢຊູໄດ້ສອນສານຸສິດເຫລົ່ານີ້ ເພື່ອຫ້າມຜູ້ທີ່ບໍ່ມີຄ່າຄວນ ຈາກການຮັບສ່ວນສິນລະລຶກ, **3 ນຟ** 18:28–29 (ມມ 9:29). ຄຳອະທິຖານສຳລັບສິນລະລຶກໄດ້ຖືກມອບໃຫ້, **ມຣນ** 4–5 (ຄພ 20:75–79).

ສິນລະລຶກຕ້ອງຖືກປະຕິບັດໂດຍປະໂລຫິດ ຫລື ແອວເດີ, **ຄພ** 20:46, 76. ຄູສອນ ແລະ ມັກຄະນາຍົກ ບໍ່ມີສິດອຳນາດ ທີ່ຈະໃຫ້ພອນສິນລະລຶກ, **ຄພ** 20:58. ນ້ຳຕ່າງໆທີ່ນອກເໜືອໄປຈາກນ້ຳເຫລົ້າ ສາມາດໃຊ້ສຳລັບສິນລະລຶກໄດ້, **ຄພ** 27:1–4.

**ສິບສອງເຜົ່າຂອງອິດສະຣາເອນ.** *ເບິ່ງ* ອິດສະຣາເອນ—ສິບສອງເຜົ່າຂອງອິດສະຣາເອນ

**ສິບໂປລາ.** *ເບິ່ງ* ໂມເຊ *ນຳອີກ*

ໃນ ພຣະຄຳພີເດີມ, ເມຍຂອງໂມເຊ ແລະ ລູກສາວຂອງເຢທະໂຣ (ອພຍ 2:21; 18:2).

**ສິບເຜົ່າ.** *ເບິ່ງ* ອິດສະຣາເອນ

**ສຸຂະພາບ.** *ເບິ່ງ* ພຣະວາຈາແຫ່ງປັນຍາ

**ສຸພາສິດ**

ຂໍ້ຄວາມ ຫລື ຄຳແນະນຳສັ້ນໆເລື່ອງສິນທຳ

*ພຣະທຳສຸພາສິດ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມທີ່ບັນຈຸຄຳອຸປະມາ, ຂໍ້ຄວາມ, ແລະ ກາບກອນຫລາຍເລື່ອງ, ບາງເລື່ອງແມ່ນຂຽນໂດຍໂຊໂລໂມນ. ພຣະທຳສຸພາສິດມັກຈະຖືກກ່າວເຖິງເລື້ອຍໆຢູ່ໃນພຣະຄຳພີໃໝ່.

ບົດທີ 1–9 ບັນຈຸຄຳອະທິບາຍເຖິງປັນຍາທີ່ແທ້ຈິງ. ບົດທີ 10–24 ບັນຈຸຂໍ້ຄວາມຈຳນວນໜຶ່ງກ່ຽວກັບວິທີດຳລົງຊີວິດທີ່ຖືກຕ້ອງ ແລະ ທີ່ບໍ່ຖືກຕ້ອງ. ບົດທີ 25–29 ບັນຈຸສຸພາສິດຂອງໂຊໂລໂມນ ທີ່ຄົນຂອງເຮເຊກີຢາ, ກະສັດຂອງຢູດາ, ໄດ້ບັນທຶກໄວ້. ບົດທີ 30–31 ຮ່ວມດ້ວຍການບັນຍາຍເຖິງຜູ້ຍິງທີ່ມີຄຸນນະທຳ.

**ສູງສົ່ງ, ຄວາມສູງສົ່ງ.** *ເບິ່ງ* ຊີວິດນິລັນດອນ; ຊົດໃຊ້, ການຊົດໃຊ້; ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ; ມົງກຸດ, ສວມມົງກຸດ; ລັດສະໝີພາບຂອງຊັ້ນສູງ *ນຳອີກ*

ສະພາບສູງສຸດແຫ່ງຄວາມສຸກ ແລະ ລັດສະໝີພາບໃນອານາຈັກຊັ້ນສູງ.

ຢູ່ຊ້ອງໜ້າພຣະອົງນັ້ນມີຄວາມຊົມຊື່ນຍິນດີ, **ພສສ** 16:11.

ພວກເຂົາເປັນພຣະເຈົ້າ, ແມ່ນແຕ່ເປັນບຸດຂອງພຣະເຈົ້າ—ດັ່ງນັ້ນ, ທຸກສິ່ງທັງປວງເປັນຂອງພວກເຂົາ, **ຄພ** 76:58–59. ໄພ່ພົນຂອງພຣະເຈົ້າຈະໄດ້ຮັບມູນມໍລະດົກຂອງພວກເຂົາ ແລະ ຖືກເຮັດໃຫ້ເທົ່າທຽມກັບພຣະອົງ, **ຄພ** 88:107. ທູດເຫລົ່ານີ້ບໍ່ໄດ້ປະຕິບັດຕາມກົດຂອງເຮົາ; ສະນັ້ນ, ພວກເຂົາຈະຄົງຢູ່ຕາມລຳພັງ, ໂດຍປາດສະຈາກຄວາມສູງສົ່ງ, **ຄພ** 132:17. ຊາຍ ແລະ ຍິງ ຕ້ອງແຕ່ງງານອີງຕາມກົດຂອງພຣະເຈົ້າ ກ່ອນຈະໄດ້ຮັບຄວາມສູງສົ່ງໄດ້, **ຄພ** 132:19–20. ປະຕູທີ່ນຳໄປສູ່ຄວາມສູງສົ່ງກໍຄັບ ແລະ ທາງກໍແຄບ, **ຄພ** 132:22–23. ອັບຣາຮາມ, ອີຊາກ, ແລະ ຢາໂຄບໄດ້ເຂົ້າໄປໃນຄວາມສູງສົ່ງຂອງພວກເຂົາ, **ຄພ** 132:29, 37. ເຮົາຜະນຶກຄວາມສູງສົ່ງໄວ້ເທິງເຈົ້າ, **ຄພ** 132:49.

**ເສກາຣີຢາ**

ສາດສະດາຂອງພຣະຄຳພີເດີມ ທີ່ໄດ້ທຳນາຍ ປະມານ 520 ປີ ກ່ອນ ຄ.ສ. ເພິ່ນມີຊີວິດຢູ່ໃນເວລາດຽວກັນກັບສາດສະດາຮັກກາຍ (ອຊຣ 5:1; 6:14).

*ພຣະທຳເຊກາຣີຢາ:* ໜັງສືເຫລັ້ມນີ້ມີຊື່ສຽງ

ເພາະຄຳທຳນາຍຂອງມັນກ່ຽວກັບການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະຄຣິດ ແລະ ການສະເດັດມາຄັ້ງທີສອງຂອງພຣະອົງ (ຊກຢ 9:9; 11:12–13; 12:10; 13:6). ບົດທີ 1–8 ບັນຈຸພາບນິມິດຫລາຍຕອນ ກ່ຽວກັບອະນາຄົດຂອງຜູ້ຄົນຂອງພຣະເຈົ້າ. ບົດທີ 9–14 ບັນຈຸພາບນິມິດກ່ຽວກັບພຣະເມຊີອາ, ຍຸກສຸດທ້າຍ, ການເຕົ້າໂຮມຂອງຊາວອິດສະຣາເອນ, ສົງຄາມໃຫຍ່ຄັ້ງສຸດທ້າຍ, ແລະ ການສະເດັດມາຄັ້ງທີສອງ.

**ເສຍສະລະ, ການເສຍສະລະ.** *ເບິ່ງ* ສິນລະລຶກ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ເລືອດ, ໂລຫິດ; ຫົວໃຈທີ່ຊອກຊ້ຳ *ນຳອີກ*

ໃນສະໄໝບູຮານ, ການເສຍສະລະ ໝາຍເຖິງການເຮັດໃຫ້ບາງສິ່ງ ຫລື ບາງຄົນສັກສິດ. ຕອນນີ້ ມັນມີຄວາມໝາຍອີກວ່າ ການສະລະໄປ ຫລື ການທົນຮັບການສູນເສຍສິ່ງຂອງທາງໂລກ ເພື່ອພຣະຜູ້ເປັນເຈົ້າ ແລະ ອານາຈັກຂອງພຣະອົງ. ສະມາຊິກໃນສາດສະໜາຈັກຂອງພຣະຜູ້ເປັນເຈົ້າຄວນເຕັມໃຈ ທີ່ຈະເສຍສະລະ ທຸກສິ່ງເພື່ອພຣະຜູ້ເປັນເຈົ້າ. ໂຈເຊັບ ສະມິດ ໄດ້ສອນວ່າ "ສາດສະໜາທີ່ບໍ່ຮຽກຮ້ອງການເສຍສະລະທຸກສິ່ງ ຈະບໍ່ມີວັນ ມີອຳນາດພຽງພໍທີ່ຈະສ້າງສັດທາອັນຈຳເປັນໃຫ້ແກ່ຊີວິດ ແລະ ຄວາມລອດ." ໃນມຸມຂອງນິລັນດອນ, ພອນທີ່ໄດ້ຮັບໂດຍການເສຍສະລະເປັນສິ່ງທີ່ຍິ່ງໃຫຍ່ກວ່າທຸກສິ່ງ ທີ່ເຮົາໄດ້ປ່ອຍໄປ.

ຫລັງຈາກອາດາມ ແລະ ເອວາ ໄດ້ຖືກຂັບໄລ່ອອກຈາກສວນເອເດນ, ພຣະຜູ້ເປັນເຈົ້າໄດ້ປະທານກົດແຫ່ງການເສຍສະລະໃຫ້ເຂົາເຈົ້າ. ກົດນີ້ລວມທັງການຖວາຍລູກຫົວປີຂອງສັດແຕ່ລະຊະນິດ. ການເສຍສະລະນີ້ ເປັນເຄື່ອງໝາຍເຖິງການເສຍສະລະ ທີ່ຈະຖືກກະທຳໂດຍພຣະບຸດອົງດຽວທີ່ຖືກຳເນີດຂອງພຣະເຈົ້າ (ມຊ 5:4–8). ການປະຕິບັດນີ້ ໄດ້ສືບຕໍ່ຈົນເຖິງເວລາພຣະເຢຊູຄຣິດສິ້ນພຣະຊົນ, ຊຶ່ງໄດ້ຢຸດຕິການມອບສັດເປັນເຄື່ອງຖວາຍ ຕາມພິທີການຂອງພຣະກົດຕິຄຸນ (ແອວ 34:13–14). ໃນສາດສະໜາຈັກ ທຸກວັນນີ້ ສະມາຊິກຮັບສ່ວນສິນລະລຶກ ທີ່ເປັນເຂົ້າຈີ່ ແລະ ນ້ຳ ໃນການລະນຶກເຖິງການເສຍສະລະຂອງພຣະເຢຊູຄຣິດ. ສະມາຊິກຂອງສາດສະໜາຈັກຂອງພຣະຄຣິດ ທຸກວັນນີ້ ກໍຖືກຂໍໃຫ້ເສຍສະລະໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດ ນຳອີກ (3 ນຟ 9:19–22). ນີ້ໝາຍຄວາມວ່າ ເຂົາເຈົ້າຖ່ອມຕົວ, ເປັນຄົນທີ່ກັບໃຈ, ແລະ ເຕັມໃຈທີ່ຈະເຊື່ອຟັງພຣະບັນຍັດຂອງພຣະເຈົ້າ.

ອັບຣາຮາມໄດ້ມັດອີຊາກລູກຊາຍຂອງຕົນ ແລະ ໄດ້ວາງລາວລົງໄວ້ເທິງແທ່ນບູຊາ, **ປຖກ** 22:1–18 (ຢຄ 4:5). ຈົ່ງເຜົາຖວາຍເຄື່ອງບູຊາ, **ອພຍ** 20:24. ສັດທີ່ຈະເອົາມາຖວາຍຕ້ອງບໍ່ມີບ່ອນຕຳໜິ, **ພບຍ** 15:19–21. ເຊື່ອຟັງກໍດີກວ່າຖວາຍ, **1 ຊມອ** 15:22.

ທີ່ຈະຮັກ ກໍປະເສີດຫລາຍກວ່າຂອງຖວາຍ ແລະ ເຄື່ອງເຜົາບູຊາທັງປວງ, **ມຣກ** 12:32–33. ເຮົາໄດ້ຮັບການຊຳລະໃຫ້ບໍລິສຸດຜ່ານການເສຍສະລະຂອງພຣະຄຣິດ, **ຮຣ** 10:10–14.

ພຣະຄຣິດໄດ້ຖວາຍພຣະອົງເອງໃຫ້ເປັນເຄື່ອງບູຊາເພື່ອບາບ, **2 ນຟ** 2:6–7. ການເສຍສະລະຄັ້ງຍິ່ງໃຫຍ່ ແລະ ຄັ້ງສຸດທ້າຍນີ້ ຈະເປັນພຣະບຸດຂອງພຣະເຈົ້າ, ແທ້ຈິງແລ້ວ, ມັນຈະບໍ່ມີຂອບເຂດ ແລະ ມັນຈະເປັນນິລັນດອນ, **ແອວ** 34:8–14. ຢ່າເຜົາສັດຖວາຍບູຊາອີກ; ແຕ່ໃຫ້ຖວາຍ ໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດແດ່ພຣະເຈົ້າ, **3 ນຟ** 9:19–20 (ພສສ 51:16–17; ຄພ 59:8).

ວັນນີ້ເປັນວັນແຫ່ງການເສຍສະລະ, **ຄພ** 64:23 (ຄພ 97:12). ທຸກຄົນຜູ້ເຕັມໃຈທີ່ຈະຍຶດຖືພັນທະສັນຍາຂອງພວກເຂົາໂດຍການເສຍສະລະ ຈະໄດ້ຮັບການຍອມຮັບຈາກພຣະຜູ້ເປັນເຈົ້າ, **ຄພ** 97:8. ໂຈເຊັບ ແອັຟ ສະມິດ ໄດ້ເຫັນວິນຍານຂອງຄົນທ່ຽງທຳ, ຜູ້ໄດ້ເສຍສະລະໃນລັກສະນະດຽວກັນກັບການເສຍສະລະຂອງພຣະຜູ້ຊ່ວຍໃຫ້ລອດ, **ຄພ** 138:13. ການໄຖ່ໄດ້ເກີດຂຶ້ນຜ່ານການເສຍສະລະຂອງພຣະບຸດຂອງພຣະເຈົ້າຢູ່ເທິງໄມ້ກາງແຂນ, **ຄພ** 138:35.

**ເສບູໂລນ.** *ເບິ່ງ* ຢາໂຄບ, ລູກຊາຍຂອງ ອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງຢາໂຄບ ກັບນາງເລອາ (ປຖກ 30:19–20).

*ເຜົ່າຂອງເສບູໂລນ:* ຢາໂຄບໄດ້ອວຍພອນ ເຜົ່າຂອງເສບູໂລນ (ປຖກ 49:13). ເຜົ່າຂອງ ເສບູໂລນ ໄດ້ເຂົ້າຮ່ວມກັບເດໂບຣາ ແລະ ບາຣັກ ເພື່ອຕໍ່ສູ້ສັດຕູຂອງອິດສະຣາເອນ (ຜປ 4:4–6, 10). ພວກເຂົາຍັງໄດ້ເຂົ້າຮ່ວມກັບ ກີເດໂອນນຳອີກ ໃນການຕໍ່ສູ້ຊາວມີດີອານ (ຜປ 6:33–35).

**ເສຟານີຢາ**

ສາດສະດາຂອງພຣະຄຳພີເດີມ ຜູ້ໄດ້ມີຊີ ວິດຢູ່ໃນລະຫວ່າງການປົກຄອງຂອງໂຈໄຊຢາ (639–608 ປີ ກ່ອນ ຄ.ສ.).

*ພຣະທຳເສຟານີຢາ:* ບົດທີ 1 ກ່າວເຖິງວັນ ທີ່ຈະມາເຖິງ ທີ່ຈະເຕັມໄປດ້ວຍພຣະພິໂລດ ແລະ ບັນຫາ. ບົດທີ 2 ຕັກເຕືອນຜູ້ຄົນຂອງ ອິດສະຣາເອນ ໃຫ້ສະແຫວງຫາຄວາມຊອບ ທຳ ແລະ ຄວາມອ່ອນໂຍນ. ບົດທີ 3 ບອກເຖິງ ການສະເດັດມາຄັ້ງທີສອງ, ເມື່ອປະຊາຊາດ ທັງປວງຈະມາໂຮມກັນເພື່ອເຮັດເສິກ. ເຖິງ ຢ່າງໃດກໍຕາມ, ພຣະຜູ້ເປັນເຈົ້າຈະປົກຄອງ ໃນທ່າມກາງພວກເຂົາ.

**ເສລີພາບ.** *ເບິ່ງ* ຊະເລີຍ, ການເປັນຊະເລີຍ; ອິດສະລະ, ອິດສະລະພາບ; ອຳເພີໃຈ *ນຳອີກ*

ສະພາວະ ຫລື ສະພາບຂອງຄວາມສາມາດ ທີ່ຈະກະທຳ ແລະ ຄິດຢ່າງມີອິດສະລະ. ການ ເຊື່ອຟັງຕໍ່ຫລັກທຳພຣະກິດຕິຄຸນ ປົດປ່ອຍບຸກ ຄົນຈາກຄວາມເປັນທາດຂອງບາບທາງວິນ ຍານ (ໂຢຮັນ 8:31–36).

ຂ້ານ້ອຍຈະໃຊ້ຊີວິດໃນເສລີພາບ: ເພາະຂ້າ ນ້ອຍພະຍາຍາມເຮັດຕາມຂໍ້ຄຳສັ່ງຂອງພຣະ ອົງ, **ພສສ** 119:45.

ທີ່ໃດທີ່ມີພຣະວິນຍານຂອງພຣະຜູ້ເປັນເຈົ້າ ຢູ່ນຳ, ທີ່ນັ້ນກໍມີເສລີພາບ, **2 ກຣທ** 3:17. ຈົ່ງ ຕັ້ງໝັ້ນຢູ່ ຊຶ່ງໃນນັ້ນພຣະຄຣິດຈຶ່ງໄດ້ປົດປ່ອຍ ພວກເຮົາໃຫ້ເປັນອິດສະລະ, **ຄລຕ** 5:1 (ຄພ 88:86).

ມະນຸດເປັນອິດສະລະທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ, **2 ນຟ** 2:27. ແຜ່ນດິນນີ້ ຈະເປັນແຜ່ນດິນແຫ່ງເສລີພາບ, **2 ນຟ** 10:11. ໂມໂຣໄນຈຶ່ງໄດ້ສ້າງຕັ້ງເສລີພາບຢ່າງມາດຕະ ຖານຂຶ້ນໃນບັນດາຊາວນີໄຟ, **ແອວ** 46:36.

ພຣະຜູ້ເປັນເຈົ້າ ແລະ ຜູ້ຮັບໃຊ້ຂອງພຣະອົງ ປະກາດເສລີພາບແກ່ວິນຍານທີ່ຖືກຈ່ອງຈຳ, **ຄພ** 138:18, 31, 42.

**ເສລຸບບາເບນ**

ໃນພຣະຄຳພີເດີມ, ເມື່ອໄຊຣັດໄດ້ອະນຸ ຍາດໃຫ້ຊາວຢິວກັບຄືນມາ ຟີລິດສະຕິນ, ເຊຣຸບບາເບນໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກ ຄອງ ຫລື ຕົວແທນຂອງວັງຊາວຢິວ. ຊື່ເປີເຊຍ ຂອງເພິ່ນແມ່ນ ເສັດບັດຊາ (ອຊຣ 1:8). ເພິ່ນມີ ສ່ວນຮ່ວມໃນການສ້ອມແຊມພຣະວິຫານ ໃນ ເຢຣູຊາເລັມ (ອຊຣ 3:2, 8; 5:2).

**ສົກກະປົກ, ຄວາມສົກກະປົກ.** *ເບິ່ງ* ຄົນ ອະທຳ; ສະອາດ ແລະ ບໍ່ສະອາດ; ຊົ່ວ ຮ້າຍ, ຄວາມຊົ່ວຮ້າຍ; ບາບ; ບໍ່ຊອບທຳ, ຄວາມບໍ່ຊອບທຳ *ນຳອີກ*

ການບໍ່ມີຄວາມສະອາດທາງວິນຍານກໍເປັນ ເພາະຄວາມເຕັມໃຈທີ່ຈະບໍ່ເຊື່ອຟັງຕໍ່ພຣະ ເຈົ້າ.

ພຣະຜູ້ເປັນເຈົ້າຈະຊຳລະລ້າງມົນທິນໃຫ້ ສິ້ນໄປຈາກກຸງເຢຣູຊາເລັມ, **ອຊຢ** 4:4 (2 ນຟ 14:4).

ອານາຈັກຂອງພຣະເຈົ້າຈະບໍ່ສົກກະປົກ, **1 ນຟ** 15:34 (ແອວ 7:21). ຜູ້ທີ່ສົກກະປົກຈະ ຍັງສົກກະປົກຢູ່, **2 ນຟ** 9:16 (ມມ 9:14). ພວກ ທ່ານຈະຮູ້ສຶກແນວໃດ ຖ້າຫາກພວກທ່ານໄດ້ ຢືນຢູ່ຕໍ່ໜ້າບ່ອນພິພາກສາຂອງພຣະເຈົ້າ, ອາ ພອນຂອງພວກທ່ານເຕັມໄປດ້ວຍຄວາມສົກ ກະປົກ, **ແອວ** 5:22.

ພວກເຂົາຈະຍັງສົກກະປົກຢູ່ຄືເກົ່າ, **ຄພ** 88:35.

ເມື່ອໃດເຮົາຈຶ່ງຈະໄດ້ພັກຜ່ອນ, ແລະ ຖືກ ຊຳລະລ້າງຈາກຄວາມສົກກະປົກ, **ມຊ** 7:48.

**ສົງຄາມ.** *ເບິ່ງ* ສະຫງົບ, ຄວາມສະຫງົບ *ນຳອີກ*

ການສູ້ຮົບ ຫລື ການຂັດແຍ້ງດ້ວຍອາວຸດ; ການຕໍ່ສູ້ດ້ວຍອາວຸດ. ພຣະ ຜູ້ເປັນເຈົ້າເຫັນດ້ວຍກັບການເຮັດສົງຄາມ ພຽງແຕ່ໃນກໍລະນີທີ່ບໍ່ເຫັນທາງອື່ນແລ້ວເທົ່ານັ້ນ ສຳລັບໄພ່ພົນຂອງພຣະເຈົ້າ ເພື່ອປ້ອງກັນຄອບຄົວ, ຊັບສົມບັດ, ສິດ, ສິດທິພິເສດ ແລະ ອິດສະລະພາບຂອງເຂົາເຈົ້າ (ແອວ 43:9, 45–47).

ໂມໂຣໄນ ໄດ້ພະຍາຍາມປ້ອງກັນຜູ້ຄົນຂອງເພິ່ນ, ສິດຂອງເພິ່ນ, ແລະ ປະເທດຊາດຂອງເພິ່ນ, ແລະ ສາດສະໜາຂອງເພິ່ນ, **ແອວ** 48:10–17.

ໂຈເຊັບ ສະມິດ ໄດ້ຮັບການເປີດເຜີຍ ແລະ ການທຳນາຍກ່ຽວກັບສົງຄາມ, **ຄພ** 87. ຈົ່ງເລີກເຮັດສົງຄາມ ແລະ ປະກາດສັນຕິສຸກ, **ຄພ** 98:16, 34–46. ພວກເຮົາເຊື່ອວ່າ ມະນຸດມີສິດຢ່າງຖືກຕ້ອງທີ່ຈະປ້ອງກັນຕົນເອງ, ໝູ່ເພື່ອນຂອງພວກເຂົາ, ແລະ ຊັບສົມບັດ, ແລະ ລັດຖະບານ, **ຄພ** 134:11.

ພວກເຮົາເຊື່ອໃນການເຊື່ອຟັງ, ການຍົກຍ້ອງ, ແລະ ໃນການສະໜັບສະໜູນກົດໝາຍ, **ຫຼຊ** 1:12.

**ສົງຄາມໃນສະຫວັນ.** *ເບິ່ງ* ກອງປະຊຸມໃນສະຫວັນ; ຊີວິດກ່ອນເກີດ *ນຳອີກ*

ການຂັດແຍ້ງທີ່ໄດ້ເກີດຂຶ້ນໃນຊີວິດກ່ອນມະຕະ ໃນບັນດາລູກໆທາງວິນຍານຂອງພຣະເຈົ້າ.

ຊາຕານ ໄດ້ຖືກຂັບໄລ່ອອກຈາກສະຫວັນ ແລະ ຖິ້ມລົງມາສູ່ໂລກ, **ພນມ** 12:4, 7–9.

ມານພ້ອມດ້ວຍວິນຍານໜຶ່ງສ່ວນສາມໃນສະຫວັນໄດ້ຖືກໂຍນລົງມາ, **ຄພ** 29:36–37. ລູຊິເຟີໄດ້ກະບົດຕໍ່ຕ້ານພຣະບຸດອົງດຽວທີ່ຖືກຳເນີດ, **ຄພ** 76:25–26.

ຊາຕານໄດ້ສະແຫວງຫາລັດສະໝີພາບຂອງພຣະບິດາ ແລະ ທີ່ຈະທຳລາຍອຳເພີໃຈຂອງມະນຸດ, **ມຊ** 4:1–4 (ອຊຢ 14:12–15; ອຣຮ 3:27–28). ຜູ້ທີ່ໄດ້ຕິດຕາມພຣະເຈົ້າ ໄດ້ຮັກສາສະພາວະທຳອິດຂອງພວກເຂົາ, ໄດ້ມາສູ່ແຜ່ນດິນໂລກ, ແລະ ໄດ້ຮັບຮ່າງກາຍ, **ອຣຮ** 3:26.

**ສຽງ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ *ນຳອີກ*

ດັ່ງທີ່ໃຊ້ຢູ່ໃນພຣະຄຳພີ, ບາງເທື່ອເປັນຂ່າວສານອອກສຽງ ທີ່ກ່າວໂດຍພຣະຜູ້ເປັນເຈົ້າ ຫລື ອັກຄະທູດຂອງພຣະອົງ. ສຸລະສຽງຂອງພຣະວິນຍານອາດບໍ່ດັງ ແຕ່ເຂົ້າເຖິງໃຈ ຫລື ຄວາມຄິດ.

ອາດາມ ແລະ ເອວາ ໄດ້ຍິນສຸລະສຽງຂອງພຣະຜູ້ເປັນເຈົ້າ, **ປຖກ** 3:8 (ມຊ 4:14). ພຣະຜູ້ເປັນເຈົ້າໄດ້ກ່າວກັບເອລີຢາ ໃນສຽງແຜ່ວເບົາ, **1 ກສ** 19:11–13.

ຄົນຊອບທຳຕິດຕາມສຸລະສຽງຂອງຜູ້ລ້ຽງທີ່ດີ, **ຢຮ** 10:1–16. ທຸກຄົນທີ່ຢູ່ຝ່າຍຄວາມຈິງ ກໍຍ່ອມຟັງສຽງຂອງເຮົາ, **ຢຮ** 18:37.

ຂ້າພະເຈົ້າໄດ້ເຊື່ອຟັງສຽງຮຽກຮ້ອງຂອງພຣະວິນຍານ, **1 ນຟ** 4:6–18. ສຸລະສຽງມາເຖິງຂ້າພະເຈົ້າ, ມີຄວາມວ່າ: ເອໂນດ, ບາບຂອງເຈົ້າໄດ້ຮັບການອະໄພໃຫ້ແລ້ວ, **ອນ** 1:5. ມັນເປັນສຸລະສຽງອ່ອນຫວານຂອງຄວາມນິ້ມນວນຢ່າງແຈ່ມແຈ້ງ ແລະ ໄດ້ສຽບແທງເຂົ້າໄປໃນຈິດວິນຍານທຸກດວງ, **ຮລມ** 5:29–33 (3 ນຟ 11:3–7).

ບໍ່ວ່າຈະເປັນໂດຍສຽງຂອງເຮົາເອງ ຫລື ໂດຍສຽງຂອງຜູ້ຮັບໃຊ້ຂອງເຮົາ, ມັນກໍເໝືອນກັນ, **ຄພ** 1:38. ສິ່ງໃດກໍຕາມທີ່ພວກເຂົາຈະກ່າວເມື່ອໄດ້ຮັບການດົນໃຈໂດຍພຣະວິນຍານບໍລິສຸດ ຈະເປັນສຸລະສຽງຂອງພຣະຜູ້ເປັນເຈົ້າ, **ຄພ** 68:2–4. ທຸກຄົນທີ່ເຊື່ອຟັງສຽງຂອງເຮົາ ຈະເຫັນໜ້າເຮົາ ແລະ ຮູ້ວ່າເຮົາເປັນຢູ່, **ຄພ** 93:1.

**ສຳນຶກ, ຄວາມສຳນຶກ.** *ເບິ່ງ* ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ *ນຳອີກ*

ຄວາມຮູ້ສຶກພາຍໃນກ່ຽວກັບສິ່ງທີ່ຖືກຕ້ອງ ແລະ ສິ່ງທີ່ຜິດ ທີ່ມາຈາກຄວາມສະຫວ່າງຂອງພຣະຄຣິດ ໃນມະນຸດທັງປວງ (ມຣນ 7:16). ພວກເຮົາໄດ້ເກີດມາພ້ອມດ້ວຍຄວາມສາມາດທຳມະຊາດ ທີ່ຈະບອກໄດ້ວ່າອັນໃດຖືກຕ້ອງ ແລະ ອັນໃດຜິດ ເພາະຄວາມສະຫວ່າງ

ຂອງພຣະຄຣິດ ທີ່ໄດ້ມອບໃຫ້ແກ່ທຸກຄົນ (ຄພ 84:46). ຄວາມສາມາດນີ້ຖືກເອີ້ນວ່າຄວາມສຳນຶກ. ການຄອບຄອງມັນເຮັດໃຫ້ເຮົາເປັນຜູ້ຮັບຜິດຊອບ. ເຊັ່ນດຽວກັບຄວາມສາມາດອື່ນໆ, ຄວາມສຳນຶກຂອງເຮົາອາດຕາຍໄປຜ່ານການບາບ ແລະ ການໃຊ້ມັນໃນທາງທີ່ຜິດ.

ພວກທຳມະຈານ ແລະ ພວກຟາຣິຊາຍຮູ້ສຶກຜິດຈາກຄວາມສຳນຶກຂອງຕົນ, **ຢຮ** 8:9. ຄວາມສຳນຶກຂອງພວກເຂົາກໍຍັງເປັນພະຍານນຳອີກ, **ຣມ** 2:14–15. ຄົນຂີ້ຕົວະຄືຄົນທີ່ໃຈສຳນຶກຜິດຂອງພວກເຂົາຖືກໝາຍໄວ້ດ້ວຍເຫລັກແດງເຜົາໄໝ້, **1 ຕມທ** 4:2.

ມະນຸດໄດ້ຮັບການແນະນຳຢ່າງພຽງພໍຈົນຮູ້ຈັກຄວາມດີຈາກຄວາມຊົ່ວ, **2 ນຟ** 2:5. ກະສັດເບັນຢາມິນມີຈິດສຳນຶກອັນໃສສະອາດຕໍ່ພຣະພັກຂອງພຣະເຈົ້າ, **ມຊຢ** 2:15. ຊາວນີໄຟກໍເຕັມໄປດ້ວຍຄວາມສຸກ, ໂດຍທີ່ມີຄວາມສະຫງົບໃນຈິດສຳນຶກ, **ມຊຢ** 4:3. ຊີເອສຣອມໄດ້ທໍລະມານພາຍໃຕ້ການສຳນຶກໃນຄວາມຜິດຂອງຕົນເອງ, **ແອວ** 14:6. ພວກເຮົາໄດ້ຮັບຄວາມຊື່ນຊົມ ຫລື ຄວາມສຳນຶກຜິດຈາກມະໂນທຳ ອີງຕາມຄວາມປາດຖະໜາຂອງເຮົາ, **ແອວ** 29:5. ການລົງໂທດ ແລະ ກົດທີ່ທ່ຽງທຳນຳຄວາມສຳນຶກຜິດຈາກມະໂນທຳມາໃຫ້, **ແອວ** 42:18. ພຣະວິນຍານຂອງພຣະຄຣິດໄດ້ຖືກມອບໃຫ້ແກ່ມະນຸດທຸກຄົນ ເພື່ອເຂົາຈະຮູ້ຈັກຄວາມດີຈາກຄວາມຊົ່ວ, **ມຣນ** 7:16.

ທຸກຄົນຄວນມີອິດສະລະທີ່ຈະໃຊ້ຄວາມສຳນຶກ, **ຄພ** 134:2. ຂ້າພະເຈົ້າມີຄວາມສຳນຶກປາດສະຈາກຄວາມຜິດ, **ຄພ** 135:4.

ພວກເຮົາເຊື່ອຖືສິດທິແຫ່ງການນະມັດສະການພຣະເຈົ້າ ຕາມການບອກຂອງຄວາມຮູ້ສຶກຜິດຊອບຂອງເຮົາເອງ, **ຫຼຊ** 1:11.

**ສວນເຄັດເຊມາເນ.** *ເບິ່ງ* ເຄັດເຊມາເນ

**ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ.** *ເບິ່ງ* ທົ່ງ; ອິດສະຣາເອນ *ນຳອີກ*

ສັນຍາລັກສຳລັບທົ່ງທຳງານທາງວິນຍານ. ຕາມປົກກະຕິແລ້ວໃນພຣະຄຳພີ, ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ ແມ່ນກ່າວເຖິງເຊື້ອສາຍອິດສະຣາເອນ ຫລື ອານາຈັກຂອງພຣະເຈົ້າຢູ່ໃນແຜ່ນດິນໂລກ. ບາງເທື່ອມັນກ່າວເຖິງຜູ້ຄົນທົ່ວໄປໃນໂລກ.

ສວນອະງຸ່ນຂອງຈອມໂຍທາ ແມ່ນເຊື້ອສາຍອິດສະຣາເອນ, **ອຊຢ** 5:7 (2 ນຟ 15:7).

ພຣະເຢຊູໄດ້ກ່າວຄຳອຸປະມາກ່ຽວກັບຄົນທຳງານຢູ່ໃນສວນອະງຸ່ນ, **ມທ** 20:1–16.

ຊາວອິດສະຣາເອນເປັນເໝືອນດັ່ງຕົ້ນໝາກກອກເທດ ທີ່ໄດ້ຮັບການບົວລະບັດຢູ່ໃນສວນອະງຸ່ນຂອງພຣະຜູ້ເປັນເຈົ້າ, **ຢຄ** 5. ຄົນຮັບໃຊ້ຂອງພຣະຜູ້ເປັນເຈົ້າຈະອອກໄປລິງ່າໄມ້ໃນສວນອະງຸ່ນຂອງພຣະອົງເປັນເທື່ອສຸດທ້າຍ, **ຢຄ** 6.

ພຣະຜູ້ເປັນເຈົ້າຈະອວຍພອນທຸກຄົນທີ່ອອກແຮງຢູ່ໃນສວນອະງຸ່ນຂອງພຣະອົງ, **ຄພ** 21:9 (ແອວ 28:14). ພວກເຈົ້າຈົ່ງອອກແຮງໃນສວນອະງຸ່ນຂອງເຮົາເປັນເທື່ອສຸດທ້າຍ, **ຄພ** 43:28.

**ສວນເອເດນ.** *ເບິ່ງ* ເອເດນ

**ສ່ວນສິບ, ເງິນສ່ວນສິບ.** *ເບິ່ງ* ເຄື່ອງຖວາຍ; ເງິນ *ນຳອີກ*

ໜຶ່ງໃນສິບສ່ວນຂອງລາຍໄດ້ທຸກໆປີຂອງບຸກຄົນ ທີ່ມອບໃຫ້ແກ່ພຣະຜູ້ເປັນເຈົ້າ ຜ່ານທາງສາດສະໜາຈັກ. ທຶນຈາກເງິນສ່ວນສິບຖືກໃຊ້ເພື່ອສ້າງຕຶກໂບດ ແລະ ພຣະວິຫານ, ເພື່ອຄ້ຳຈູນວຽກງານການເຜີຍແຜ່ສາດສະໜາ, ແລະ ເພື່ອສ້າງສາອານາຈັກຂອງພຣະເຈົ້າ ຢູ່ເທິງແຜ່ນດິນໂລກ.

ອັບຣາຮາມໄດ້ຖວາຍໜຶ່ງສ່ວນສິບຂອງທຸກສິ່ງທີ່ເພິ່ນມີ ໃຫ້ແກ່ເມນຄີເສເດັກ, **ປຖກ** 14:18–20 (ຮຣ 7:1–2, 9; ແອວ 13:15). ສ່ວນສິບທັງໝົດເປັນຂອງພຣະຜູ້ເປັນເຈົ້າ: ມັນເປັນຂອງສັກສິດແດ່ພຣະຜູ້ເປັນເຈົ້າ, **ລລວ** 27:30–34. ພວກເຈົ້າຕ້ອງຈ່າຍໜຶ່ງສ່ວນສິບຂອງທຸກສິ່ງ, **ພບຍ** 14:22, 28. ພວກເຂົາໄດ້ນຳໜຶ່ງສ່ວນສິບຂອງທຸກສິ່ງທີ່ພວກເຂົາມີ ມາຖວາຍ, **2 ຂຄ** 31:5. ມັນເປັນການຖືກຕ້ອງບໍທີ່ມະນຸດສໍ້ໂກງພຣະເຈົ້າ? ສໍ້ໂກງຢ່າງໃດ? ກໍສໍ້ໂກງໃນ

ເລື່ອງໜຶ່ງສ່ວນສິບ ແລະ ເຄື່ອງຖວາຍຕ່າງໆ ນັ້ນແຫລະ, **ມລກ** 3:8–11 (3 ນຟ 24:8–11).

ຄົນທີ່ຈ່າຍສ່ວນສິບຈະບໍ່ຖືກເຜົາໄໝ້ໃນການສະເດັດມາຂອງພຣະອົງ, **ຄພ** 64:23 (ຄພ 85:3). ບ້ານຂອງພຣະຜູ້ເປັນເຈົ້າ ຈະຖືກສ້າງຂຶ້ນດ້ວຍເງິນສ່ວນສິບຂອງຜູ້ຄົນຂອງພຣະອົງ, **ຄພ** 97:11–12. ພຣະຜູ້ເປັນເຈົ້າໄດ້ເປີດເຜີຍກົດສ່ວນສິບ, **ຄພ** 119. ເງິນສ່ວນສິບຈະຖືກຈັດການໂດຍສະພາ, **ຄພ** 120.

**ສອນ, ຜູ້ສອນ, ຄູສອນ.** *ເບິ່ງ* ພຣະວິນຍານບໍລິສຸດ *ບຳອິກ*

ເພື່ອໃຫ້ຄວາມຮູ້ແກ່ຄົນອື່ນ, ໂດຍສະເພາະກ່ຽວກັບຄວາມຈິງຂອງພຣະກິດຕິຄຸນ, ແລະ ນຳພາເຂົາໄປສູ່ຄວາມຊອບທຳ. ຜູ້ຄົນທີ່ສອນພຣະກິດຕິຄຸນ ຄວນໄດ້ຮັບການຊີ້ນຳໂດຍພຣະວິນຍານ. ພໍ່ແມ່ທຸກຄົນເປັນຜູ້ສອນ ພາຍໃນຄອບຄົວຂອງຕົນ. ໄພ່ພົນຂອງພຣະເຈົ້າ ຄວນສະແຫວງຫາ ແລະ ເຕັມໃຈທີ່ຈະຮັບເອົາຄຳແນະນຳຈາກພຣະຜູ້ເປັນເຈົ້າ ແລະ ຜູ້ນຳຂອງພຣະອົງ.

ຈົ່ງສອນມັນໃຫ້ແກ່ພວກລູກຫລານຂອງພວກເຈົ້າ, **ພບຍ** 4:8–9. ຈົ່ງສິດສອນລູກຫລານຂອງພວກເຈົ້າໃຫ້ຮຽນຮູ້ເອົາ, **ພບຍ** 6:7 (ພບຍ 11:18–19). ຈົ່ງສັ່ງສອນລູກໃຫ້ຮູ້ທາງດຳເນີນຊີວິດ, **ສພສ** 22:6. ລູກໆຂອງພວກເຈົ້າຈະໄດ້ຖືກສິດສອນເລື່ອງພຣະຜູ້ເປັນເຈົ້າ, **ອຊຢ** 54:13 (3 ນຟ 22:13).

ພວກຂ້ານ້ອຍຮູ້ວ່າ ທ່ານເປັນຄູສອນມາຈາກພຣະເຈົ້າ, **ຢຮ** 3:2. ເມື່ອເຈົ້າສອນຄົນອື່ນ ເປັນຫຍັງເຈົ້າຈຶ່ງບໍ່ສອນຕົນເອງກ່ອນ, **ຣມ** 2:21.

ຂ້າພະເຈົ້າໄດ້ຮັບການສິດສອນມາແດ່ແລ້ວໃນສິ່ງທີ່ຮຽນຮູ້ທັງໝົດຂອງບິດາຂອງຂ້າພະເຈົ້າ, **1 ນຟ** 1:1 (ອນ 1:1). ປະໂລຫິດ ແລະ ຜູ້ສອນ ຕ້ອງສອນຢ່າງພາກພຽນ ຖ້າບໍ່ດັ່ງນັ້ນຕ້ອງຮັບຜິດຊອບຮັບເອົາບາບຂອງຜູ້ຄົນໄວ້ເທິງຫົວຂອງພວກເຂົາເອງ, **ຢຄ** 1:18–19. ຈົ່ງເຊື່ອຟັງຂ້າພະເຈົ້າ, ແລະ ເປີດຫູຂອງພວກທ່ານ, **ມຊຢ** 2:9. ພວກທ່ານຈະສອນລູກໆຂອງພວກທ່ານໃຫ້ຮັກກັນ ແລະ ຮັບໃຊ້ຊຶ່ງກັນແລະກັນ, **ມຊຢ** 4:15. ບໍ່ໃຫ້ໄວ້ວາງໃຈຜູ້ສັ່ງສອນຜູ້ໃດ ຖ້າຫາກເຂົາບໍ່ໄດ້ເປັນຂອງພຣະເຈົ້າ, **ມຊຢ** 23:14. ພຣະຜູ້ເປັນເຈົ້າໄດ້ຖອກເທພຣະວິນຍານຂອງພຣະອົງລົງມາທົ່ວແຜ່ນດິນ ເພື່ອຕຽມໃຈຂອງພວກເຂົາ ເພື່ອຮັບພຣະຄຳ, **ແອວ** 16:16. ເຂົາເຈົ້າກໍສິດສອນດ້ວຍອຳນາດ ແລະ ສິດອຳນາດຂອງພຣະເຈົ້າ, **ແອວ** 17:2–3. ພວກເຂົາໄດ້ຮັບການສິດສອນຈາກແມ່ຂອງພວກເຂົາ, **ແອວ** 56:47 (ແອວ 57:21).

ຕາບໃດທີ່ເຂົາຍັງສະແຫວງຫາປັນຍາ ເຂົາຈະໄດ້ຮັບຄຳແນະນຳ, **ຄພ** 1:26. ຈົ່ງສອນກັນແລະກັນຕາມໜ້າທີ່ຊຶ່ງເຮົາໄດ້ແຕ່ງຕັ້ງພວກເຈົ້າ, **ຄພ** 38:23. ສອນຫລັກທຳພຣະກິດຕິຄຸນຂອງເຮົາ, ຊຶ່ງມີຢູ່ໃນພຣະຄຣິສຕະທຳຄຳພີ ແລະ ພຣະຄຳພີມໍມອນ, **ຄພ** 42:12. ເຈົ້າຈະໄດ້ຮັບການສິດສອນຈາກເບື້ອງບົນ, **ຄພ** 43:15–16. ພໍ່ແມ່ຕ້ອງສອນລູກໆຂອງພວກເຂົາ, **ຄພ** 68:25–28. ຈົ່ງສອນຄຳສອນຂອງອານາຈັກໃຫ້ກັນແລະກັນ, **ຄພ** 88:77–78, 118. ຈົ່ງກຳນົດໃຫ້ມີຜູ້ສອນໃນບັນດາພວກເຈົ້າ, **ຄພ** 88:122. ເຈົ້າບໍ່ໄດ້ສອນຄວາມສະຫວ່າງ ແລະ ຄວາມຈິງໃຫ້ແກ່ລູກໆຂອງເຈົ້າ, ແລະ ນີ້ຄືສາເຫດຂອງຄວາມທຸກທໍລະມານຂອງເຈົ້າ, **ຄພ** 93:39–42.

ເພື່ອສອນສິ່ງເຫລົ່ານີ້ຢ່າງເປັນອິດສະລະກັບລູກໆຂອງເຈົ້າ, **ມຊ** 6:57–61.

*ການສອນດ້ວຍພຣະວິນຍານ:* ຖ້ອຍຄຳທີ່ພວກເຈົ້າຈະເວົ້ານັ້ນ ຈະບໍ່ມາຈາກພວກເຈົ້າເອງ, ແຕ່ແມ່ນພຣະວິນຍານທີ່ຈະກ່າວໃນພວກເຈົ້າ, **ມທ** 10:19–20. ເມື່ອພຣະອົງອະທິບາຍພຣະຄຳພີໃຫ້ພວກເຮົາຟັງ ໃຈຂອງພວກເຮົາກໍຮ້ອນຮົນເໝືອນໄຟພາຍໃນພວກເຮົາບໍ່ແມ່ນຫລື, **ລກ** 24:32. ພຣະກິດຕິຄຸນໄດ້ຖືກສັ່ງສອນໂດຍອຳນາດຂອງພຣະວິນຍານ, **1 ກຣທ** 2:1–14.

ເພິ່ນໄດ້ເວົ້າດ້ວຍອຳນາດ ແລະ ສິດອຳນາດຈາກພຣະເຈົ້າ, **ມຊຢ** 13:5–9 (ແອວ 17:3; ຮລມ 5:17).

ເຈົ້າຈະມີວິນຍານຂອງເຮົາ ໃນການໃຫ້

ມະນຸດຍອມຮັບ, **ຄພ** 11:21. ເຈົ້າຈະຖືກໄດ້ຍິນໃນທຸກສິ່ງ ທີ່ເຈົ້າສອນໂດຍພຣະຜູ້ປອບໂຍນ, **ຄພ** 28:1 (ຄພ 52:9). ຖ້າຫາກພວກເຈົ້າບໍ່ໄດ້ຮັບພຣະວິນຍານ ພວກເຈົ້າຈະບໍ່ສອນ, **ຄພ** 42:14 (ຄພ 42:6). ສອນລູກຫລານມະນຸດ ໂດຍອຳນາດຂອງວິນຍານຂອງເຮົາ, **ຄພ** 43:15. ແອວເດີຕ້ອງສັ່ງສອນພຣະກິດຕິຄຸນໂດຍພຣະວິນຍານ, **ຄພ** 50:13–22. ມັນຈະຖືກມອບໃຫ້ແກ່ພວກເຈົ້າໃນຊົ່ວໂມງນັ້ນເອງ ວ່າພວກເຈົ້າຈະກ່າວຫຍັງ, **ຄພ** 84:85 (ຄພ 100:5–8).

**ຊະເຕຟາໂນ**

ສະເຕຟາໂນໄດ້ຖືກຂ້າຍ້ອນຄວາມເຊື່ອເພື່ອພຣະຜູ້ຊ່ວຍໃຫ້ລອດ ແລະ ເພື່ອສາດສະໜາຈັກຂອງພຣະອົງໃນສະໄໝຂອງພຣະຄຳພີໃໝ່. ການສັ່ງສອນຂອງລາວໄດ້ຖືກບອກໄວ້ລ່ວງໜ້າ ແລະ ອາດເປັນອິດທິພົນໃຫ້ແກ່ວຽກງານອັນຍິ່ງໃຫຍ່ຂອງໂປໂລ, ຜູ້ມີໜ້າຢູ່ຕອນທີ່ສະເຕຟາໂນຕໍ່ສູ້ຄະດີຢູ່ສານຊານເຮດຣິນ (ກຈກ 8:1; 22:20).

ສະເຕຟາໂນເປັນຜູ້ໜຶ່ງໃນບັນດາຜູ້ຊາຍເຈັດຄົນ ທີ່ໄດ້ຖືກແຕ່ງຕັ້ງໃຫ້ຮັບໃຊ້ອັກຄະສາວົກສິບສອງ, **ກຈກ** 6:1–8. ສະເຕຟາໂນໄດ້ເຮັດສິ່ງມະຫັດສະຈັນ ແລະ ໝາຍສຳຄັນອັນຍິ່ງໃຫຍ່, **ກຈກ** 6:8. ສະເຕຟາໂນໄດ້ໂຕ້ຖຽງກັບຊາວຢິວ, **ກຈກ** 6:9–10. ລາວຖືກກ່າວຫາ ແລະ ໄດ້ຖືກນຳຕົວຂຶ້ນໄປຍັງສານຊານເຮດຣິນ, **ກຈກ** 6:11–15. ສະເຕຟາໂນໄດ້ສະເໜີຄະດີຂອງລາວ, **ກຈກ** 7:2–53. ໂດຍທີ່ເຕັມໄປດ້ວຍພຣະວິນຍານບໍລິສຸດ, ລາວໄດ້ເຫັນພຣະບິດາ ແລະ ພຣະບຸດໃນພາບນິມິດ, **ກຈກ** 7:55–56. ສະເຕຟາໂນໄດ້ຖືກສັງຫານເພາະປະຈັກພະຍານຂອງລາວ, **ກຈກ** 7:54–60.

**ຊະເລີຍ, ການເປັນຊະເລີຍ.** *ເບິ່ງ* ອິດສະລະ, ອິດສະລະພາບ *ນຳອີກ*

ຄວາມເປັນທາດທາງຮ່າງກາຍ ຫລື ທາງວິນຍານ.

ເຊື້ອສາຍອິດສະຣາເອນໄດ້ຕົກເປັນຊະເລີຍເພາະຄວາມຊົ່ວຮ້າຍຂອງພວກເຂົາ, **ອຊກ** 39:23.

ຜູ້ໃດທີ່ກຳນົດໄວ້ໃຫ້ເປັນຊະເລີຍ ຜູ້ນັ້ນກໍຈະຕ້ອງໄປເປັນຊະເລີຍ, **ພນມ** 13:10.

ຄົນຊົ່ວຮ້າຍຈະຖືກນຳລົງໄປສູ່ການເປັນຊະເລີຍຂອງມານ, **1 ນຟ** 14:4, 7. ມະນຸດເປັນອິດສະລະທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ ຫລື ຈະເລືອກການເປັນຊະເລີຍ ແລະ ຄວາມຕາຍ, **2 ນຟ** 2:27. ຄວາມປະສົງຂອງເນື້ອໜັງຈະໃຫ້ອຳນາດແກ່ວິນຍານຂອງມານທີ່ຈະຈັບກຸມ, **2 ນຟ** 2:29. ພວກທ່ານໄດ້ເກັບຄວາມເປັນຊະເລີຍຂອງບັນພະບຸລຸດຂອງພວກທ່ານໄວ້ພຽງພໍຫລືບໍ່ໃນຄວາມຊົງຈຳ, **ແອວ** 5:5–6. ຜູ້ທີ່ຈະເຮັດໃຈແຂງກະດ້າງຍ່ອມຖືກມານເອົາໄປເປັນຊະເລີຍ, **ແອວ** 12:11. ຈົ່ງຄອຍເຝົ້າລະວັງ ແລະ ອະທິຖານຢູ່ສະເໝີ, ເພື່ອເຈົ້າຈະບໍ່ໄດ້ຖືກມານລໍ້ລວງ, ແລະ ຖືກມັນນຳໄປເປັນຊະເລີຍ, **3 ນຟ** 18:15.

**ຊັດຣາກ.** *ເບິ່ງ* ດານີເອນ *ນຳອີກ*

ໃນພຣະຄຳພີເດີມ, ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ເປັນຊາຍໜຸ່ມຊາວອິດສະຣາເອນສາມຄົນ ຜູ້ຊຶ່ງພ້ອມດ້ວຍດານີເອນ, ໄດ້ຖືກພາໄປຫາວັງຂອງເນບູກາດເນັດສາ, ກະສັດແຫ່ງບາບີໂລນ. ຊື່ເຮັບເຣີຂອງຊັດຣາກແມ່ນ ຮານານີຢາ. ຊາຍໜຸ່ມສີ່ຄົນໄດ້ປະຕິເສດບໍ່ຍອມເຮັດໃຫ້ຕົນເອງເສື່ອມເສຍໂດຍການກິນຊີ້ນ ແລະ ດື່ມເຫລົ້າອະງຸ່ນຂອງກະສັດ (ດນອ 1). ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ຖືກກະສັດສັ່ງໃຫ້ໂຍນເຂົ້າເຕົາໄຟຮ້ອນ ແຕ່ພວກເຂົາໄດ້ຖືກຮັກສາໄວ້ຢ່າງມະຫັດສະຈັນ (ດນອ 3).

**ຊາຂາຣີຢາ.** *ເບິ່ງ* ໂຢຮັນບັບຕິສະໂຕ; ເອລີຊາເບັດ *ນຳອີກ*

ໃນພຣະຄຳພີໃໝ່, ບິດາຂອງໂຢຮັນບັບຕິສະໂຕ. ຊາຂາຣີຢາໄດ້ມີຕຳແໜ່ງເປັນປະໂລຫິດ ແລະ ປະຕິບັດໜ້າທີ່ໃນພຣະວິຫານ.

ຊາຂາຣີຢາໄດ້ຖືກຂ້າລະຫວ່າງພຣະວິຫານ ແລະ ແທ່ນບູຊາ, **ມທ** 23:35 (ລກ 11:51).

ທູດຄັບຣີເອນໄດ້ສັນຍາຊາຂາຣີຢາ ແລະ ເອລີຊາເບັດ ເມຍຂອງລາວ ວ່າເຂົາເຈົ້າຈະມີລູກຊາຍຄົນໜຶ່ງ, **ລກ** 1:5–25 (ຄພ 27:7). ລາວສາມາດເວົ້າໄດ້, **ລກ** 1:59–79.

**ຊາດູກາຍ.** *ເບິ່ງ* ຊາວຢິວ *ບຳອິກ*

ເປັນກຸ່ມນ້ອຍ ແຕ່ມີອຳນາດຫລາຍທາງການເມືອງໃນບັນດາຊາວຢິວ. ເຂົາເຈົ້າເປັນທີ່ຮູ້ຈັກກັນດີວ່າເປັນຄົນທີ່ເຄັ່ງຄັດທີ່ສຸດໃນຄວາມເຊື່ອ ເລື່ອງເຮັດຕາມກົດຂອງໂມເຊ ແລະ ປະຕິເສດຄວາມເປັນຈິງກ່ຽວກັບ ວິນຍານ ແລະ ທູດ ແລະ ກ່ຽວກັບຄຳສອນເລື່ອງການຟື້ນຄືນຊີວິດ ແລະ ຊີວິດນິລັນດອນ (ມຣກ 12:18–27; ກຈກ 4:1–3; 23:7–8).

**ຊາຕານ.** *ເບິ່ງ* ມານ

**ຊານເຮດຣິນ.** *ເບິ່ງ* ຊາວຢິວ *ບຳອິກ*

ສະພາສູງ ແລະ ສານສູງສຸດຂອງຊາວຢິວ ທັງຝ່າຍບ້ານເມືອງ ແລະ ສາດສະໜາ. ຊານເຮດຣິນ ປະກອບດ້ວຍສະມາຊິກເຈັດສິບເອັດຄົນ ຄັດເລືອກຈາກບັນດາຫົວໜ້າປະໂລຫິດ, ເລຂາທິການ, ແລະ ຜູ້ເຖົ້າແກ່. ໃນພຣະຄຳພີ, ມັນມັກຈະຖືກເອີ້ນວ່າສະພາ (ມທ 26:59; ມຣກ 14:55; ກຈກ 5:34).

**ຊາມາເຣຍ.** *ເບິ່ງ* ຊາວຊາມາເຣຍ *ບຳອິກ*

ໃນພຣະຄຳພີເດີມ, ເມືອງຫລວງຂອງອານາຈັກພາກເໜືອຂອງອິດສະຣາເອນ (1 ກສ 16:23–24). ເພາະພະລັງອັນເຂັ້ມແຂງຂອງກອງທັບທີ່ຕັ້ງຢູ່ເທິງຄ້ອຍພູ, ຊາວອັດຊີເຣຍຈຶ່ງບໍ່ສາມາດຍຶດເອົາຕົວເມືອງນີ້ໄດ້, ແຕ່ຫລັງຈາກໄດ້ປິດລ້ອມເມືອງໄວ້ເປັນເວລາສາມປີ ພວກເຂົາຈຶ່ງສາມາດຍຶດເອົາມັນໄດ້ (2 ກສ 17:5–6). ເຮໂຣດໄດ້ສ້ອມແປງເມືອງຂຶ້ນໃໝ່ ແລະ ເອີ້ນມັນວ່າ ຊີບັດ. ໃນສະໄໝຂອງພຣະຄຳພີໃໝ່, ຊາມາເຣຍ ເປັນຊື່ຂອງພາກກາງຂອງຟີລິດສະຕິນ ທາງພາກຕາເວັນຕົກຂອງແມ່ນ້ຳຈໍແດນ.

**ຊາມູເອນ, ສາດສະດາໃນພຣະຄຳພີເດີມ**

ລູກຊາຍຂອງເອນການາກັບນາງຮັນນາ, ຊາມູເອນໄດ້ເກີດມາ ເພື່ອເປັນຄຳຕອບໃຫ້ແກ່ຄຳອະທິຖານຂອງແມ່ລາວ (1 ຊມອ 1). ຕອນຍັງນ້ອຍ ລາວໄດ້ຖືກພາໄປຢູ່ນຳເອລີ, ຜູ້ເປັນມະຫາປະໂລຫິດຢູ່ພຣະວິຫານຂອງພຣະເຈົ້າຢູ່ເມືອງຊີໂລ (1 ຊມອ 2:11; 3:1). ພຣະຜູ້ເປັນເຈົ້າໄດ້ເອີ້ນຊາມູເອນ ຕອນລາວຍັງນ້ອຍ ໃຫ້ເປັນສາດສະດາ (1 ຊມອ 3). ຫລັງຈາກເອລີໄດ້ຕາຍໄປ, ຊາມູເອນໄດ້ກາຍເປັນສາດສະດາ ແລະ ຜູ້ຕັດສິນທີ່ຍິ່ງໃຫຍ່ຂອງອິດສະຣາເອນ ແລະ ໄດ້ສະຖາປະນາກົດໝາຍ, ລະບຽບ, ແລະ ແບບແຜນການນະມັດສະການຝ່າຍສາດສະໜາ ໃນແຜ່ນດິນຄືນມາໃໝ່ (1 ຊມອ 4:15–18; 7:3–17).

1 ຊາມູເອນ 28:5–20 ບັນຈຸເລື່ອງລາວຂອງຊາມູເອນ ທີ່ໄດ້ຖືກເອີ້ນເອົາວິນຍານຄືນມາໂດຍຜູ້ຍິງຄົນໜຶ່ງທີ່ເປັນໝໍຜີ ຢູ່ເມືອງເອນໂດເຣ ຕາມຄຳຂໍຮ້ອງຂອງກະສັດໂຊນ. ສິ່ງນີ້ຄົງບໍ່ແມ່ນພາບນິມິດຈາກພຣະເຈົ້າ, ເພາະວ່າໝໍຜີຫລື ຜູ້ມີເວດມົນຄາຖາ ບໍ່ມີອຳນາດທີ່ຈະສັ່ງໃຫ້ສາດສະດາເຮັດຕາມຄຳຂໍຮ້ອງຂອງພວກເຂົາ.

*ໜັງສືຂອງຊາມູເອນສະບັບທີໜຶ່ງ ແລະ ສອງ:* ໃນພຣະຄຣິສຕະທຳຄຳພີບາງສະບັບ, ໜັງສືຂອງຊາມູເອນສະບັບທີ 1 ແລະ 2 ຖືກຮວມໄວ້ເປັນປຶ້ມເຫລັ້ມດຽວກັນ. ໃນບາງສະບັບກໍຖືກແຍກເປັນສອງເຫລັ້ມ. ໜັງສືສອງເຫລັ້ມນີ້ໄດ້ຮອບຮວມປະຫວັດສາດເປັນເວລາປະມານ 130 ປີ, ຈາກຕອນຊາມູເອນເກີດ ຈົນເຖິງກ່ອນການສິ້ນຊີວິດຂອງກະສັດດາວິດ.

*ພຣະທຳຊາມູເອນທີໜຶ່ງ:* ບົດທີ 1–3 ບັນຍາຍວ່າ ພຣະຜູ້ເປັນເຈົ້າໄດ້ສາບແຊ່ງ ແລະ ລົງໂທດຄອບຄົວຂອງເອລີ ແລະ ໄດ້ເອີ້ນຊາມູເອນ ໃຫ້ເປັນມະຫາປະໂລຫິດ ແລະ ຜູ້ຕັດສິນ. ບົດທີ 4–6 ບອກກ່ຽວກັບຫີບຄຳໝັ້ນສັນຍາ ໄດ້ຕົກຢູ່ໃນກຳມືຂອງຊາວຟີລິດສະຕິນ. ບົດທີ 7–8 ບັນທຶກຄຳເຕືອນຂອງຊາມູເອນ ກ່ຽວກັບການມີພຣະປອມ ແລະ ມີກະສັດທີ່ຊົ່ວຮ້າຍ. ບົດທີ 9–15 ບັນຍາຍເຖິງການແຕ່ງຕັ້ງໂຊນໃຫ້ເປັນກະສັດ ແລະ ການປົກຄອງຂອງເພິ່ນໃນຖານະກະສັດ. ບົດທີ 16–31 ເລົ່າປະຫວັດຂອງດາວິດ ແລະ ການມີອຳນາດຂອງເພິ່ນ—ຊາມູ

ເອນໄດ້ເຈີມດາວິດ ຜູ້ໄດ້ຂ້າໂກລີອາດ. ໂຊນກຽດຊັງດາວິດ, ແຕ່ດາວິດປະຕິເສດບໍ່ຍອມຂ້າໂຊນ ເຖິງແມ່ນເພິ່ນມີໂອກາດທີ່ຈະເຮັດກໍຕາມ.

*ພຣະທຳຊາມູເອນທີສອງ:* ໜັງສືບັນຈຸລາຍລະອຽດເລື່ອງການປົກຄອງດາວິດ ໃນຖານະກະສັດຂອງຢູດາ ແລະ ໃນທີ່ສຸດ ຂອງອິດສະຣາເອນທັງໝົດ. ບົດທີ 1–4 ສະແດງໃຫ້ເຫັນເຖິງການດີ້ນລົນລະຫວ່າງຜູ້ຕິດຕາມຂອງດາວິດ, ຫລັງຈາກເພິ່ນໄດ້ຂຶ້ນເປັນກະສັດຂອງຢູດາ, ແລະ ຜູ້ຕິດຕາມຂອງໂຊນ. ບົດທີ 5–10 ສະແດງໃຫ້ເຫັນ ວິທີທີ່ດາວິດກາຍເປັນຜູ້ມີພະລັງຕະຫລອດທົ່ວແຜ່ນດິນ. ບົດທີ 11–21 ສະແດງໃຫ້ເຫັນຄວາມເສື່ອມໂຊມຂອງພະລັງທາງວິນຍານຂອງດາວິດ ເພາະການບາບ ແລະ ການກະບົດຂອງເພິ່ນ ພາຍໃນຄອບຄົວຂອງເພິ່ນເອງ. ບົດທີ 22–24 ບັນຍາຍເຖິງຄວາມພະຍາຍາມຂອງດາວິດ ທີ່ຈະຄືນດີກັບພຣະຜູ້ເປັນເຈົ້າ.

**ຊາມູເອນຄົນເລມັນ**

ສາດສະດາຊາວເລມັນ ໃນພຣະຄຳພີມໍມອນ ທີ່ພຣະຜູ້ເປັນເຈົ້າໄດ້ສົ່ງໄປສອນ ແລະ ເຕືອນຊາວນີໄຟ ບໍ່ດົນກ່ອນການກຳເນີດຂອງພຣະຜູ້ຊ່ວຍໃຫ້ລອດ. ຊາມູເອນໄດ້ທຳນາຍເຄື່ອງໝາຍທີ່ກ່ຽວພັນກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ ແລະ ຄວາມພິນາດຂອງຊາວນີໄຟ (ຮລມ 13–16).

**ຊາເລັມ.** *ເບິ່ງ* ເມນຄີເສເດັກ; ເຢຣູຊາເລັມ *ນຳອີກ*

ເມືອງໜຶ່ງໃນພຣະຄຳພີເດີມ ບ່ອນທີ່ເມນຄີເສເດັກປົກຄອງ. ມັນອາດຕັ້ງຢູ່ບ່ອນທີ່ ໃນທຸກວັນນີ້ເອີ້ນວ່າ ເຢຣູຊາເລັມ. ຄຳວ່າ "ຊາເລັມ" ຄ້າຍຄືຄຳເຮັບເຣີ ທີ່ໝາຍເຖິງ "ສັນຕິສຸກ."

ເມນຄີເສເດັກຜູ້ທີ່ເປັນກະສັດແຫ່ງນະຄອນຊາເລັມ ໄດ້ເອົາເຂົ້າຈີ່ກັບເຫລົ້າອະງຸ່ນມາ, **ປຖກ** 14:18.

ເມນຄີເຊເດັກ, ກະສັດແຫ່ງເມືອງຊາເລັມ, ເປັນປະໂລຫິດຂອງພຣະເຈົ້າຜູ້ສູງສຸດ, **ຮຮ** 7:1–2.

ເມນຄີເສເດັກເປັນກະສັດປົກຄອງແຜ່ນດິນຊາເລັມ, **ແອວ** 13:17–18.

**ຊາຣາ.** *ເບິ່ງ* ອັບຣາຮາມ *ນຳອີກ*

ໃນພຣະຄຳພີເດີມ, ເມຍຄົນທຳອິດຂອງອັບຣາຮາມ. ໃນຕອນເຖົ້າແກ່ ນາງໄດ້ກາຍເປັນແມ່ຂອງອີຊາກ (ປຖກ 18:9–15; 21:2).

**ຊາໄຣຢາ.** *ເບິ່ງ* ລີໄຮ, ບິດາຂອງນີໄຟ *ນຳອີກ*

ໃນພຣະຄຳພີມໍມອນ, ເມຍຂອງລີໄຮ (1 ນຟ 5:1–8; 8:14–16; 18:19) ແລະ ແມ່ຂອງເລມັນ, ເລມູເອນ, ແຊມ, ນີໄຟ, ຢາໂຄບ, ໂຈເຊັບ, ແລະ ລູກສາວຫລາຍຄົນ (1 ນຟ 2:5; 2 ນຟ 5:6).

**ຊາວໂກຣິນໂທ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໜັງສືສອງເຫລັ້ມໃນພຣະຄຳພີໃໝ່. ມັນເປັນໜັງສືສະບັບຕົ້ນທີ່ໂປໂລໄດ້ຂຽນເຖິງໄພ່ພົນຂອງພຣະເຈົ້າ ໃນໂກຣິນໂທ ເພື່ອດັດແປງຄວາມບໍ່ເປັນລະບຽບໃນບັນດາພວກເຂົາ. ຊາວໂກຣິນໂທໄດ້ອາໄສໃນສັງຄົມທີ່ຊົ່ວຮ້າຍຫລາຍທາງສິນທຳ.

*ໂກຣິນໂທສະບັບທີໜຶ່ງ:* ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລ ແລະ ຄຳຕັກເຕືອນຂອງເພິ່ນຕໍ່ໄພ່ພົນຂອງພຣະເຈົ້າໃຫ້ເປັນນ້ຳໜຶ່ງໃຈດຽວກັນ. ບົດທີ 2–6 ຄຳຕັກເຕືອນຂອງໂປໂລຕໍ່ຄວາມຜິດຂອງໄພ່ພົນຂອງພຣະເຈົ້າຊາວໂກຣິນໂທ. ບົດທີ 7–12 ບັນຈຸຄຳຕອບຂອງໂປໂລຕໍ່ຄຳຖາມບາງຢ່າງ. ບົດທີ 13–15 ມີຄວາມເປັນຫ່ວງເປັນໃຍເລື່ອງຄວາມໃຈບຸນ, ຂອງປະທານທາງວິນຍານ, ແລະ ການຟື້ນຄືນຊີວິດ. ບົດທີ 16 ບັນຈຸຄຳແນະນຳຂອງໂປໂລເພື່ອໃຫ້ຍຶດໝັ້ນໃນສັດທາ.

*ໂກຣິນໂທສະບັບທີສອງ:* ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລ ແລະ ຄຳປອບໂຍນ. ບົດທີ 2 ບັນຈຸຄຳແນະນຳສ່ວນຕົວສຳລັບຕີໂຕ. ບົດທີ 3–7 ກ່ຽວກັບພະລັງຂອງພຣະກິດຕິຄຸນໃນຊີວິດຂອງໄພ່ພົນຂອງພຣະເຈົ້າ ແລະ ຜູ້ນຳຂອງເຂົາເຈົ້າ. ບົດທີ 8–9 ແນະນຳໄພ່ພົນຂອງພຣະເຈົ້າໃຫ້ເປັນຜູ້ມອບໃຫ້ແກ່ຄົນຍາກຈົນ

ດ້ວຍຄວາມເບີກບານໃຈ. ບົດທີ 10–12 ເປັນການປະກາດຕຳແໜ່ງຂອງໂປໂລ ໃນຖານະເປັນອັກຄະສາວົກ. ບົດທີ 13 ເປັນຄຳແນະນຳໃຫ້ເປັນຄົນດີພ້ອມທຸກຢ່າງ.

**ຊາວຄາລາເຕຍ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໜັງສືເຫລັ້ມໜຶ່ງໃນພຣະຄຳພີໃໝ່. ຕົ້ນສະບັບເປັນຈົດໝາຍທີ່ອັກຄະສາວົກໂປໂລໄດ້ຂຽນເຖິງໄພ່ພົນຂອງພຣະເຈົ້າທີ່ອາໄສຢູ່ທົ່ວຄາລາເຕຍ. ເນື້ອໃຫຍ່ໃຈຄວາມຂອງຈົດໝາຍນີ້ແມ່ນວ່າອິດສະລະພາບທີ່ແທ້ຈິງສາມາດຖືກພົບເຫັນພຽງແຕ່ຢູ່ໃນການດຳລົງຊີວິດຕາມພຣະກິດຕິຄຸນຂອງພຣະເຢຊູຄຣິດເທົ່ານັ້ນ. ຖ້າຫາກໄພ່ພົນຂອງພຣະເຈົ້າໄດ້ຮັບເອົາການສິດສອນຂອງຊາວຄຣິດສະຕຽນທີ່ເປັນຊາວຢິວ ຜູ້ຮັກສາກົດຂອງໂມເຊຢ່າງເອົາຈິງເອົາຈັງ, ແລ້ວເຂົາເຈົ້າຈະຈຳກັດ ຫລື ທຳລາຍອິດສະລະພາບຂອງຕົນທີ່ພົບເຫັນໃນພຣະຄຣິດ. ຢູ່ໃນສານ ໂປໂລໄດ້ສະຖາປະນາການເປັນອັກຄະສາວົກຂອງເພິ່ນເອງ, ໄດ້ອະທິບາຍຄຳສອນແຫ່ງຄວາມຊອບທຳໂດຍສັດທາ, ແລະ ຢືນຢັນຄຸນຄ່າຂອງສາດສະໜາທາງແຫ່ງວິນຍານ.

ໃນບົດທີ 1 ແລະ 2, ໂປໂລໄດ້ສະແດງຄວາມເສຍໃຈກັບຂ່າວທີ່ເພິ່ນໄດ້ຮັບເລື່ອງການປະຖິ້ມຄວາມເຊື່ອ ໃນບັນດາຊາວຄາລາເຕຍ ແລະ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບຕຳແໜ່ງຂອງເພິ່ນໃນບັນດາອັກຄະສາວົກ. ບົດທີ 3 ແລະ 4 ສົນທະນາກ່ຽວກັບຄຳສອນຂອງສັດທາ ແລະ ວຽກງານ. ບົດທີ 5 ແລະ 6 ບັນຈຸຄຳເທດສະໜາເລື່ອງຜົນຂອງຄຳສອນແຫ່ງສັດທາ.

**ຊາວຄຣິດສະຕຽນ.** *ເບິ່ງ* ສານຸສິດ; ໄພ່ພົນຂອງພຣະເຈົ້າ *ນຳອີກ*

ຊື່ທີ່ມອບໃຫ້ແກ່ຜູ້ທີ່ເຊື່ອໃນພຣະເຢຊູຄຣິດ. ເຖິງແມ່ນວ່າຄຳນີ້ຖືກໃຊ້ທົ່ວໄປຕະຫລອດທົ່ວໂລກກໍຕາມ, ແຕ່ພຣະຜູ້ເປັນເຈົ້າແຕ່ງຕັ້ງຜູ້ຕິດຕາມທີ່ແທ້ຈິງຂອງພຣະຄຣິດໃຫ້ເປັນໄພ່ພົນຂອງພຣະເຈົ້າ (ກຈກ 9:13, 32, 41; 1 ກຣທ 1:2; ຄພ 115:4).

ສານຸສິດຖືກເອີ້ນວ່າຊາວຄຣິດສະຕຽນ, **ກຈກ** 11:26. ຖ້າມີຜູ້ໃດໄດ້ຮັບທຸກເພາະມີຊື່ວ່າເປັນຄຣິດສະຕຽນກໍຢ່າໃຫ້ຜູ້ນັ້ນມີຄວາມລະອາຍ, **1 ເປໂຕ** 4:16.

ເພາະພັນທະສັນຍາ ພວກທ່ານຈະຖືກເອີ້ນວ່າ ລູກຂອງພຣະຄຣິດ, **ມຊຢ** 5:7. ຜູ້ທີ່ເຊື່ອຢ່າງແທ້ຈິງຖືກເອີ້ນວ່າຄຣິດສະຕຽນ ໂດຍຜູ້ທີ່ບໍ່ໄດ້ເປັນສະມາຊິກຂອງສາດສະໜາຈັກ, **ແອວ** 46:13–16.

**ຊາວຊາມາເຣຍ.** *ເບິ່ງ* ຊາມາເຣຍ *ນຳອີກ*

ຜູ້ຄົນໃນພຣະຄຣິສຕະທຳຄຳພີ ທີ່ອາໄສຢູ່ໃນຊາມາເຣຍ ຫລັງຈາກອານາຈັກພາກເໜືອຂອງອິດສະຣາເອນ ໄດ້ຖືກຍຶດໄປໂດຍຊາວອັດຊີເຣຍ. ຊາວຊາມາເຣຍພາກສ່ວນໜຶ່ງແມ່ນຊາວອິດສະຣາເອນ ແລະ ພາກສ່ວນໜຶ່ງແມ່ນຄົນຕ່າງຊາດ. ສາດສະໜາຂອງເຂົາເຈົ້າແມ່ນການປະປົນກັນທັງຄວາມເຊື່ອ ແລະ ການປະຕິບັດຂອງຊາວຢິວ ແລະ ຊາວເພເກັນທີ່ບໍ່ມີສາດສະໜາ. ຄຳອຸປະມາເລື່ອງໄທຊາມາເຣຍຜູ້ໃຈດີ ໃນ ລູກາ 10:25–37 ສະແດງເຖິງຄວາມກຽດຊັງ ທີ່ຊາວຢິວມີຕໍ່ຊາວຊາມາເຣຍ ເພາະວ່າຊາວຊາມາເຣຍໄດ້ປະຖິ້ມຄວາມເຊື່ອ ຈາກສາດສະໜາຂອງຊາວອິດສະຣາເອນ. ພຣະຜູ້ເປັນເຈົ້າໄດ້ຊັກນຳອັກຄະສາວົກ ໃຫ້ສອນພຣະກິດຕິຄຸນ ແກ່ຊາວຊາມາເຣຍ (ກຈກ 1:6–8). ຟີລິບໄດ້ສິດສອນພຣະກິດຕິຄຸນຂອງພຣະຄຣິດຢ່າງມີປະສິດທິພາບ ແກ່ຊາວຊາມາເຣຍ ແລະ ໄດ້ເຮັດສິ່ງມະຫັດສະຈັນຫລາຍຢ່າງໃນບັນດາພວກເຂົາ (ກຈກ 8:5–39).

**ຊາວເທສະໂລນິກ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໜັງສືສອງເຫລັ້ມໃນພຣະຄຳພີໃໝ່. ມັນເປັນຈົດໝາຍສະບັບຕົ້ນທີ່ໂປໂລ ໄດ້ຂຽນເຖິງຊາວເທສະໂລນິກ ໃນຂະນະທີ່ລາວຢູ່ເມືອງໂກຣິນໂທ ລະຫວ່າງການໄປຢ້ຽມຢາມເອີຣົບເທື່ອທຳອິດຂອງລາວ ປະມານ ຄ.ສ. 50. ວຽກງານຂອງລາວ ໃນເມືອງເທສະໂລນິກ ໄດ້ຖືກບັນຍາຍໄວ້ ໃນ ກິດຈະການ 17. ໂປໂລ ຢາກກັບຄືນໄປເມືອງເທສະໂລນິກ ແຕ່ບໍ່ສາມາດ

ເຮັດໄດ້ (1 ທສນ 2:18). ສະນັ້ນລາວຈຶ່ງໄດ້ສົ່ງຕີໂມທຽວໄປໃຫ້ກຳລັງໃຈຜູ້ປ່ຽນໃຈເຫລື້ອມໃສ ແລະ ມາລາຍງານ ລາວກ່ຽວກັບຄວາມທຸກສຸກຂອງສະມາຊິກ. ໂປໂລໄດ້ຂຽນສານສະບັບທຳອິດ ເນື່ອງດ້ວຍຄວາມຂອບພຣະໄທຂອງລາວສຳລັບການກັບຄືນມາຂອງຕີໂມທຽວ.

*ເທສະໂລນິກ ສະບັບທີໜຶ່ງ:* ບົດທີ 1–2 ບັນຈຸຄຳທັກທາຍຂອງໂປໂລ ແລະ ຄຳອະທິຖານຂອງລາວສຳລັບໄພ່ພົນຂອງພຣະເຈົ້າ; ບົດທີ 3–5 ໄດ້ໃຫ້ຄຳແນະນຳເລື່ອງການເຕີບໂຕທາງວິນຍານ, ຄວາມຮັກ, ແລະ ພົມມະຈັນ, ຄວາມພາກພຽນ, ແລະ ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ.

*ເທສະໂລນິກ ສະບັບທີສອງ:* ບົດທີ 1 ບັນຈຸຄຳອະທິຖານສຳລັບໄພ່ພົນຂອງພຣະເຈົ້າ. ບົດທີ 2 ກ່າວເຖິງການປະຖິ້ມຄວາມເຊື່ອທີ່ຈະເກີດຂຶ້ນ. ບົດທີ 3 ບັນຈຸຄຳອະທິຖານຂອງໂປໂລ ເພື່ອອຸດົມການແຫ່ງພຣະກິດຕິຄຸນຈະມີໄຊ.

**ຊາວນີໄຟ.** *ເບິ່ງ* ຊາວເລມັນ; ນີໄຟ, ລູກຊາຍຂອງລີໄຮ; ພຣະຄຳພີມໍມອນ *ນຳອີກ*

ຜູ້ຄົນກຸ່ມໜຶ່ງໃນພຣະຄຳພີມໍມອນ, ຫລາຍຄົນເປັນຜູ້ສືບຕະກຸນຂອງສາດສະດານີໄຟ, ລູກຊາຍຂອງລີໄຮ. ພວກເຂົາໄດ້ແຍກຕົວອອກຈາກຊາວເລມັນ ແລະ ໂດຍທົ່ວໄປແລ້ວເປັນຄົນຊອບທຳກວ່າຊາວເລມັນ. ເຖິງຢ່າງໃດກໍຕາມ, ໃນທີ່ສຸດພວກເຂົາກໍໄດ້ຖືກຊາວເລມັນທຳລາຍ ເພາະຄວາມຊົ່ວຮ້າຍ.

ຊາວນີໄຟແຍກຕົວອອກຈາກຊາວເລມັນ, **2 ນຟ** 5:5–17. ທຸກຄົນທີ່ບໍ່ແມ່ນຊາວເລມັນກໍເປັນຊາວນີໄຟ, **ຢຄ** 1:13. ຊາວນີໄຟຍັງໄດ້ຮັບກຳລັງໃຈດ້ວຍອຸດົມການທີ່ດີກວ່າ, **ແອວ** 43:6–9, 45. ຊາວນີໄຟບໍ່ເຄີຍມີເວລາໃດເລີຍທີ່ສະຫງົບສຸກເກີນກວ່າໃນວັນເວລາຂອງໂມໂຣໄນ, **ແອວ** 50:23. ຊາວນີໄຟໄດ້ຖືກຊ່ວຍໃຫ້ລອດເພາະຄຳອະທິຖານຂອງຄົນທີ່ຊອບທຳ, **ແອວ** 62:40. ຊາວນີໄຟໄດ້ເລີ່ມເສື່ອມໂຊມລົງຢູ່ໃນຄວາມບໍ່ເຊື່ອຖື, **ຮລມ** 6:34–35. ພຣະເຢຊູໄດ້ສິດສອນ ແລະ ປະຕິບັດສາດສະໜາກິດໃນບັນດາຊາວນີໄຟ, **3 ນຟ** 11:1–28:12. ຜູ້ຄົນທັງໝົດໄດ້ປ່ຽນໃຈເຫລື້ອມໃສພຣະຜູ້ເປັນເຈົ້າ ແລະ ມີເຂົ້າຂອງທັງໝົດນຳກັນເປັນສ່ວນລວມ, **4 ນຟ** 1:2–3. ມັນບໍ່ມີການຂັດແຍ້ງກັນ, ຄວາມຮັກຂອງພຣະເຈົ້າມີຢູ່ໃນໃຈຂອງພວກເຂົາ, ແລະ ພວກເຂົາເປັນຄົນທີ່ມີຄວາມສຸກທີ່ສຸດ, **4 ນຟ** 1:15–16. ຊາວນີໄຟເລີ່ມອວດດີ ແລະ ຖືຕົວ, **4 ນຟ** 1:43. ມີເລືອດ ແລະ ການຂ້າຟັນຕະຫລອດທົ່ວພື້ນແຜ່ນດິນ, **ມມ** 2:8. ຊາວນີໄຟໄດ້ຊົ່ວຮ້າຍຫລາຍຂຶ້ນ ແລະ ມໍມອນໄດ້ປະຕິເສດບໍ່ນຳພາພວກເຂົາ, **ມມ** 3:9–11. ຊາວນີໄຟທັງໝົດໄດ້ຖືກຂ້າຕາຍຍົກເວັ້ນແຕ່ຊາວສີ່ຄົນ, **ມມ** 6:7–15. ຊາວນີໄຟທຸກຄົນຜູ້ບໍ່ປະຕິເສດພຣະຄຣິດ ໄດ້ຖືກຂ້າ, **ມຣນ** 1:2.

ຊາວນີໄຟໄດ້ຖືກທຳລາຍເພາະຄວາມຊົ່ວຮ້າຍ ແລະ ບາບຂອງພວກເຂົາ, **ຄພ** 3:18. ຈົ່ງລະວັງຄວາມທະນົງຕົວ ຖ້າບໍ່ດັ່ງນັ້ນພວກເຈົ້າຈະກາຍເປັນເໝືອນດັ່ງຊາວນີໄຟ, **ຄພ** 38:39.

**ຊາວຟີລິບປອຍ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ຈົດໝາຍທີ່ໂປໂລໄດ້ຂຽນເຖິງໄພ່ພົນຂອງພຣະເຈົ້າ ໃນຟີລິບປອຍ ໃນຂະນະທີ່ລາວຕິດຄຸກຢູ່ກຸງໂຣມ ເທື່ອທຳອິດ. ຕອນນີ້ ມັນເປັນພຣະທຳຟີລິບປອຍ ໃນພຣະຄຳພີໃໝ່.

ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລ ແລະ ຄຳແນະນຳຂອງລາວກ່ຽວກັບຄວາມເປັນໜຶ່ງ, ຄວາມອ່ອນນ້ອມ, ແລະ ຄວາມບາກບັ່ນ. ບົດທີ 2 ເນັ້ນວ່າ ທຸກຄົນຈະກົ້ມຂາບພຣະຄຣິດ ແລະ ວ່າແຕ່ລະຄົນ ຕ້ອງເຮັດວຽກງານຂອງຄວາມລອດໃຫ້ຕົນເອງ. ໃນ ບົດທີ 3, ໂປໂລໄດ້ອະທິບາຍວ່າ ລາວໄດ້ເສຍສະລະທຸກສິ່ງເພື່ອພຣະຄຣິດ. ໃນ ບົດທີ 4, ໂປໂລໄດ້ຂອບໃຈໄພ່ພົນຂອງພຣະເຈົ້າຊາວຟີລິບປອຍ ສຳລັບຄວາມຊ່ວຍເຫລືອຂອງພວກເຂົາ.

**ຊາວຢາເຣັດ.** *ເບິ່ງ* ພຣະຄຳພີມໍມອນ; ຢາເຣັດ; ຢາເຣັດ, ນ້ອງຊາຍຂອງ *ນຳອີກ*

ຜູ້ຄົນໃນພຣະຄຳພີມໍມອນ ທີ່ເປັນລູກຫລານ

ຂອງ ຢາເຣັດ, ນ້ອງ ຊາຍ ຂອງ ລາວ, ແລະ ໝູ່ເພື່ອນຂອງເຂົາເຈົ້າ (ອທ 1:33–41). ພຣະເຈົ້າໄດ້ນຳພາເຂົາເຈົ້າຈາກຫໍບາເບນ ໄປຫາອາເມຣິກາ, ແຜ່ນດິນແຫ່ງຄຳສັນຍາ (ອທ 1:42–43; 2–3; 6:1–18). ເຖິງແມ່ນວ່າຄັ້ງໜຶ່ງປະຊາຊາດຂອງເຂົາເຈົ້າມີຈຳນວນເຖິງໜຶ່ງລ້ານຄົນ, ແຕ່ທັງໝົດໄດ້ຖືກທຳລາຍ ໂດຍສົງຄາມ ຊຶ່ງເກີດຂຶ້ນເນື່ອງດ້ວຍຄົນຊົ່ວ (ອທ 14–15).

**ຊາວຢິວ.** *ເບິ່ງ* ຢູດາ (ລູກຊາຍຂອງຢາໂຄບ); ອິດສະຣາເອນ *ບຳອິກ*

ຊາວຢິວອາດເປັນໄດ້ທັງ (1) ຜູ້ສືບຕະກຸນຂອງຢູດາ, ລູກຊາຍ ຄົນໜຶ່ງ ໃນຈຳນວນລູກຊາຍສິບສອງຄົນຂອງຢາໂຄບ, (2) ຜູ້ຄົນໃນສະໄໝບູຮານໃນອານາຈັກພາກໃຕ້ຂອງຢູດາ, ຫລື (3) ຜູ້ຄົນທີ່ປະພຶດຕົນຕາມສາດສະໜາ, ການດຳລົງຊີວິດ, ແລະ ຮີດຄອງປະເພນີຕາມສາດສະໜາຢູດາ ແຕ່ອາດເປັນ ຫລື ບໍ່ໄດ້ເປັນຊາດຢິວໂດຍກຳເນີດກໍໄດ້. ມັນໄດ້ກາຍເປັນຄວາມເຄີຍຊິນທີ່ຈະກ່າວຄຳວ່າ ຊາວຢິວ ເພື່ອໝາຍເຖິງຕະກຸນຂອງຢາໂຄບ, ແຕ່ມັນເປັນສິ່ງຜິດ. ມັນຄວນຖືກໃຊ້ພຽງແຕ່ກັບຄົນຈາກອານາຈັກຢູດາ ຫລື, ໂດຍສະເພາະຢ່າງຍິ່ງໃນປະຈຸບັນນີ້, ຄົນຂອງເຜົ່າຢູດາ ແລະ ຊົນເຜົ່າອື່ນໆທີ່ກ່ຽວຂ້ອງກັນ.

ອຳນາດຈະບໍ່ຖືກເອົາໄປຈາກຢູດາ ຈົນກວ່າຊີໂລມາ, **ປຖກ** 49:10.

ຂ່າວປະເສີດນັ້ນເປັນລິດອຳນາດຂອງພຣະເຈົ້າເພື່ອໃຫ້ທຸກຄົນທີ່ເຊື່ອໄດ້ຮັບຄວາມພົ້ນ, ພວກຢິວກ່ອນ, **ຣມ** 1:16.

ພຣະຜູ້ເປັນເຈົ້າຈະລ້ຽງຄົນຜູ້ໜຶ່ງເປັນສາດສະດາໃນບັນດາຊາວຢິວ—ຄືພຣະເມຊີອາ, **1 ນຟ** 10:4. ເມື່ອໜັງສືໄດ້ອອກມາຈາກປາກຂອງຊາວຢິວ, ເລື່ອງທີ່ຂຽນໄວ້ແມ່ນແຈ່ມແຈ້ງ ແລະ ບໍລິສຸດ, **1 ນຟ** 14:23. ຊາວຢິວຈະກະຈັດກະຈາຍໄປໃນບັນດາປະຊາຊາດທັງປວງ, **2 ນຟ** 25:15. ຊາວຢິວເປັນຜູ້ຄົນແຫ່ງພັນທະສັນຍາຂອງເຮົາໃນສະໄໝບູຮານ, **2 ນຟ** 29:4. ຊາວຢິວຊຶ່ງກະຈັດກະຈາຍໄປ ຈະເລີ່ມເຊື່ອໃນພຣະຄຣິດ, **2 ນຟ** 30:7. ຊາວຢິວຈະບໍ່ຍອມຮັບຫີນຊຶ່ງຢູ່ເທິງນັ້ນພວກເຂົາຈະໄດ້ສ້າງ, **ຢຄ** 4:14–16. ຊາວຢິວຈະມີພະຍານອື່ນອີກວ່າພຣະເຢຊູຄືພຣະຄຣິດອົງນັ້ນ, **ມມ** 3:20–21.

ສາດສະດາສອງທ່ານຈະຖືກຍົກຂຶ້ນໃຫ້ປະຊາຊາດຊາວຢິວໃນຍຸກສຸດທ້າຍ, **ຄພ** 77:15. ຈົ່ງເອີ້ນຫາປະຊາຊາດ, ທຳອິດຫາຄົນຕ່າງຊາດ, ແລະ ຈາກນັ້ນຫາຊາວຢິວ, **ຄພ** 133:8.

ໃນວັນເຫລົ່ານັ້ນ ຄວາມທຸກຍາກລຳບາກທີ່ສຸດຈະເກີດກັບຊາວຢິວ, **ຈສ—ມ** 1:18.

**ຊາວເລມັນ.** *ເບິ່ງ* ຊາວນີໄຟ; ພຣະຄຳພີມໍມອນ; ເລມັນ *ບຳອິກ*

ຜູ້ຄົນກຸ່ມໜຶ່ງໃນພຣະຄຳພີມໍມອນ, ຊຶ່ງຜູ້ຄົນສ່ວນຫລາຍເປັນເຊື້ອສາຍຂອງເລມັນ, ລູກຊາຍກົກຂອງລີໄຮ. ພວກເຂົາຮູ້ສຶກວ່າ ນີໄຟ ແລະ ເຊື້ອສາຍຂອງລາວໄດ້ເຮັດຜິດຕໍ່ພວກເຂົາ (ມຊຍ 10:11–17). ຜົນກໍຄື, ພວກເຂົາໄດ້ກະບົດຕໍ່ຊາວນີໄຟ ແລະ ມັກຈະປະຕິເສດຄຳສອນເລື່ອງພຣະກິດຕິຄຸນສະເໝີ. ເຖິງຢ່າງໃດກໍຕາມ, ບໍ່ດົນກ່ອນການມາກຳເນີດຂອງພຣະເຢຊູຄຣິດ, ຊາວເລມັນໄດ້ຮັບເອົາພຣະກິດຕິຄຸນ ແລະ ເປັນຄົນຊອບທຳຫລາຍກວ່າຊາວນີໄຟ (ຮລມ 6:34–36). ສອງຮ້ອຍປີຫລັງຈາກພຣະຄຣິດໄດ້ມາຢ້ຽມຢາມອາເມຣິກາ, ທັງຊາວເລມັນ ແລະ ຊາວນີໄຟ ໄດ້ກາຍເປັນຄົນຊົ່ວ ແລະ ເລີ່ມຕົ້ນປະກາດສົງຄາມຕໍ່ຕ້ານກັນແລະກັນ. ປະມານ ຄ.ສ. 400, ຊາວເລມັນໄດ້ທຳລາຍຊາວນີໄຟຈົນໝົດສິ້ນ.

ຊາວເລມັນໄດ້ຊະນະລູກຫລານຂອງນີໄຟ, **1 ນຟ** 12:19–20. ຊາວເລມັນໄດ້ກຽດຊັງຊາວນີໄຟ, **2 ນຟ** 5:14. ຊາວ ເລມັນຈະເປັນໄພພິບັດຕໍ່ຊາວນີໄຟ, **2 ນຟ** 5:25. ພຣະຄຳພີມໍມອນຈະນຳຄວາມຮູ້ເລື່ອງບັນພະບຸລຸດຂອງພວກ ເຂົາ ແລະ ເລື່ອງພຣະກິດຕິຄຸນຂອງພຣະເຢຊູຄຣິດມາໃຫ້ພວກເຂົາ, **2 ນຟ** 30:3–6 (ໜ້າວິເຄາະສະບັບຂອງພຣະຄຳພີມໍມອນ).

ຊາວເລມັນເປັນຜູ້ທີ່ເຫລືອຢູ່ຂອງຊາວຢິວ, **ຄພ** 19:27. ຊາວເລມັນຈະບານສະພັ່ງເໝືອນດັ່ງດອກກຸຫລາບ ກ່ອນການສະເດັດມາຂອງພຣະຜູ້ເປັນເຈົ້າ, **ຄພ** 49:24.

**ຊາວອາມາລະໄຄ (ພຣະຄຳພີມໍມອນ)**

ຊາວນີໄຟຜູ້ປະຖິ້ມຄວາມເຊື່ອກຸ່ມໜຶ່ງ ຜູ້ໄດ້ນຳພາຊາວເລມັນມາເຮັດເສິກກັບຊາວນີໄຟ (ແອວ 21–24; 43).

**ຊາວອາມາລະໄຄ (ພຣະຄຳພີເດີມ)**

ເຜົ່າອາຣັບທີ່ໄດ້ອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານປາຣານ ລະຫວ່າງ ອາຣາບາ ແລະ ເມດີແຕຣາເນ. ພວກເຂົາມັກເຮັດສົງຄາມກັບຊາວເຮັບເຣີ ຈາກວັນເວລາຂອງໂມເຊ (ອພຍ 17:8) ຈົນເຖິງວັນເວລາຂອງໂຊນ ແລະ ດາວິດ (1 ຊມອ 15; 27:8; 30; 2 ຊມອ 8:11–12).

**ຊາວເຮັບເຣີ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໜັງສືໃນພຣະຄຳພີໃໝ່. ໂປໂລໄດ້ຂຽນຈົດໝາຍສະບັບນີ້ເຖິງສະມາຊິກຂອງສາດສະໜາຈັກທີ່ເປັນຊາວຢິວ ເພື່ອເກ້ຍກ່ອມເຂົາເຈົ້າວ່າສ່ວນສຳຄັນຂອງກົດຂອງໂມເຊໄດ້ສົມບູນແລ້ວໃນພຣະຄຣິດ ແລະ ວ່າກົດແຫ່ງພຣະກິດຕິຄຸນທີ່ສູງກວ່າຂອງພຣະຄຣິດໄດ້ມາທົດແທນ. ເມື່ອໂປໂລໄດ້ກັບມາທີ່ເຢຣູຊາເລັມໃນບັ້ນທ້າຍຂອງການໄປສອນສາດສະໜາເທື່ອທີສາມຂອງເພິ່ນ (ປະມານ ຄ.ສ. 60), ເພິ່ນໄດ້ພົບເຫັນວ່າ ສະມາຊິກຂອງສາດສະໜາຈັກທີ່ເປັນຊາວຢິວຍັງປະຕິບັດຕາມກົດຂອງໂມເຊຢູ່ (ກຈກ 21:20). ເປັນເວລາຢ່າງໜ້ອຍສິບປີຫລັງຈາກກອງປະຊຸມຂອງສາດສະໜາຈັກຢູ່ເຢຣູຊາເລັມຈຶ່ງເຫັນໄດ້ວ່າ ພິທີການບາງຢ່າງໃນກົດຂອງໂມເຊບໍ່ຈຳເປັນຕໍ່ຄວາມລອດຂອງຊາວຄຣິດສະຕຽນຄົນຕ່າງຊາດ. ປະກົດວ່າ, ບໍ່ດົນຫລັງຈາກນັ້ນໂປໂລ ໄດ້ຂຽນເຖິງຊາວເຮັບເຣີ ເພື່ອສະແດງໃຫ້ເຂົາເຈົ້າເຫັນໂດຍທາງພຣະຄຳພີຂອງເຂົາເຈົ້າເອງ ແລະ ໂດຍເຫດຜົນທີ່ເໝາະສົມ ວ່າເປັນຫຍັງເຂົາເຈົ້າຈຶ່ງບໍ່ຈຳເປັນຕ້ອງປະຕິບັດຕາມກົດຂອງໂມເຊອີກຕໍ່ໄປ.

ບົດທີ 1 ແລະ 2 ອະທິບາຍວ່າພຣະເຢຊູຍິ່ງໃຫຍ່ກວ່າເຫລົ່າທູດ. ບົດທີ 3–7 ປຽບທຽບພຣະເຢຊູໃສ່ກັບໂມເຊ ແລະ ໃສ່ກັບກົດຂອງໂມເຊ ແລະ ເປັນພະຍານວ່າພຣະອົງຍິ່ງໃຫຍ່ກວ່າທັງສອງ. ທັງສອງໄດ້ສິດສອນວ່າ ຖານະປະໂລຫິດແຫ່ງເມນຄີເສເດັກແມ່ນຍິ່ງໃຫຍ່ກວ່າຖານະປະໂລຫິດແຫ່ງອາໂຣນ. ບົດທີ 8–9 ອະທິບາຍພິທີການຂອງໂມເຊ ທີ່ຕຽມຜູ້ຄົນສຳລັບການປະຕິບັດສາດສະໜາກິດຂອງພຣະຄຣິດ ແລະ ເຖິງວິທີທີ່ພຣະຄຣິດເປັນຜູ້ເປັນກາງຂອງພັນທະສັນຍາໃໝ່ (ແອວ 37:38–45; ຄພ 84:21–24). ບົດທີ 10 ເປັນຄຳແນະນຳໃຫ້ມີຄວາມພາກພຽນ ແລະ ຊື່ສັດ. ບົດທີ 11 ເປັນຄຳປາໄສກ່ຽວກັບສັດທາ. ບົດທີ 12 ໃຫ້ຄຳແນະນຳ ແລະ ການທັກທາຍ. ບົດທີ 13 ກ່ຽວພັນກັບລະບຽບການແຕ່ງງານທີ່ມີກຽດ ແລະ ຄວາມສຳຄັນຂອງການເຊື່ອຟັງ.

**ຊີບລັນ.** *ເບິ່ງ* ແອວມາ, ລູກຊາຍຂອງແອວມາ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນໜຶ່ງຂອງແອວມາຜູ້ເປັນລູກ. ຊີບລັນໄດ້ສອນພຣະກິດຕິຄຸນໃຫ້ແກ່ຊາວໂຊຣຳ ແລະ ໄດ້ຖືກຂົ່ມເຫັງເພາະຄວາມຊອບທຳຂອງລາວ. ພຣະຜູ້ເປັນເຈົ້າໄດ້ປົດປ່ອຍລາວຈາກການຂົ່ມເຫັງ ເພາະຄວາມຊື່ສັດ ແລະ ຄວາມອົດທົນຂອງລາວ (ແອວ 38). ຊີບລັນກໍໄດ້ຮັກສາບັນທຶກຂອງຊາວນີໄຟນຳອີກ ຊົ່ວໄລຍະໜຶ່ງ (ແອວ 63:1–2, 11–13).

**ຊີນັດ**

ສາດສະດາຂອງຊາວອິດສະຣາເອນ ໃນສະໄໝຂອງພຣະຄຳພີເດີມ ຜູ້ໄດ້ທຳນາຍເຖິງພາລະກິດຂອງພຣະຄຣິດ ທີ່ພົບເຫັນພຽງແຕ່ໃນພຣະຄຳພີມໍມອນເທົ່ານັ້ນ.

ໄດ້ທຳນາຍກ່ຽວກັບການຝັງພຣະສົບຂອງພຣະຄຣິດ ແລະ ສາມວັນທີ່ປົກຄຸມໄປດ້ວຍຄວາມມືດ, **1 ນຟ** 19:10, 12. ໄດ້ບອກລ່ວງໜ້າກ່ຽວກັບການເຕົ້າໂຮມຂອງຊາວອິດສະຣາເອນ, **1 ນຟ** 19:16. ຢາໂຄບໄດ້ອ້າງເຖິງຄຳອຸປະມາຂອງຊີນັດກ່ຽວກັບຕົ້ນໝາກກອກເທດ ແລະ ຕົ້ນໝາກກອກປ່າ, **ຢຄ** 5. ຢາໂຄບໄດ້ຊີ້ແຈງຄຳປຽບທຽບຂອງຊີນັດ, **ຢຄ** 6:1–10. ໄດ້ສອນກ່ຽວກັບການອະທິຖານ ແລະ ການນະມັດສະການ, **ແອວ** 33:3–11. ໄດ້ສອນວ່າການໄຖ່ມາເຖິງໂດຍທາງພຣະຄຣິດ, **ແອວ**

34:7. ໄດ້ຖືກຂ້າ ເພາະ ປະຈັກ ພະຍານ ທີ່ ກ້າຫານຂອງເພິ່ນ, **ຣລມ** 8:19. ໄດ້ກ່າວກ່ຽວກັບການນຳຊາວເລມັນກັບຄືນມາ, **ຣລມ** 15:11. ໄດ້ໃຫ້ຖ້ອຍຄຳເຖິງການທຳລາຍໃນຕອນພຣະຄຣິດສິ້ນພຣະຊົນ, **3 ນຟ** 10:15–16.

**ຊີນາຍ, ພູ.** *ເບິ່ງ* ກົດຂອງໂມເຊ; ໂມເຊ *ນຳອີກ*

ພູໜ່ວຍໜຶ່ງຢູ່ແຈແຫລມຊີນາຍ, ໃກ້ບ່ອນທີ່ໂມເຊ ແລະ ຊາວອິດສະຣາເອນ ຕັ້ງຄ້າຍເປັນເວລາສາມເດືອນ ຫລັງຈາກທີ່ເຂົາເຈົ້າໄດ້ອົບພະຍົບຈາກປະເທດເອຢິບ; ມັນຍັງຖືກເອີ້ນອີກວ່າ ພູໂຮເຣັບ (ອພຍ 3:1). ຢູ່ທີ່ນີ້ ພຣະເຈົ້າໄດ້ປະທານກົດຂອງພຣະອົງໃຫ້ແກ່ໂມເຊ ສຳລັບເຊື້ອສາຍອິດສະຣາເອນ; ພ້ອມນີ້ ຢູ່ທີ່ນີ້ ຍັງໄດ້ສ້າງຫໍເຕັ້ນສັກສິດຂຶ້ນນຳອີກ (ອພຍ 19:2; 20:18; 24:12; 32:15).

**ຊີນິບ**

ໃນພຣະຄຳພີມໍມອນ, ຊາຍຜູ້ທີ່ໄດ້ນຳພາຜູ້ຄົນກຸ່ມໜຶ່ງກັບໄປແຜ່ນດິນນີໄຟ; ເພິ່ນໄດ້ກາຍເປັນກະສັດຂອງພວກເຂົາ ແລະ ໄດ້ນຳພາພວກເຂົາໃນຄວາມຊອບທຳ (ມຊຍ 9–10).

**ຊີໂນກ**

ສາດສະດາຂອງຊາວອິດສະຣາເອນ ໃນສະໄໝຂອງພຣະຄຳພີເດີມ ຜູ້ໄດ້ຖືກກ່າວເຖິງພຽງແຕ່ໃນພຣະຄຳພີມໍມອນເທົ່ານັ້ນ.

ໄດ້ທຳນາຍເຖິງການສິ້ນພຣະຊົນຂອງພຣະຄຣິດ, **1 ນຟ** 19:10. ໄດ້ເວົ້າເຖິງພຣະບຸດຂອງພຣະເຈົ້າ, **ແອວ** 33:15 (ແອວ 34:7). ໄດ້ຖືກສັງຫານເພາະຄວາມຈິງ, **ແອວ** 33:17. ໄດ້ທຳນາຍກ່ຽວກັບການສະເດັດມາຂອງພຣະເມຊີອາ, **ຣລມ** 8:20.

**ຊີເມໂອນ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຄົນທີສອງຂອງຢາໂຄບ ກັບ ເນຍຊື່ ເລອາ (ປຖກ 29:33; 35:23; ອພຍ 1:2). ລາວໄດ້ຮ່ວມມືກັບເລວີ ໃນການສັງຫານຊາວຊີເຄມ (ປຖກ 34:25–31). ຄຳທຳນາຍຂອງຢາໂຄບ ກ່ຽວກັບຊີເມໂອນ ມີຢູ່ໃນ ປະຖົມມະການ 49:5–7.

*ເຜົ່າຂອງຊີເມໂອນ:* ລູກຫລານຂອງຊີເມໂອນ ມັກອາໄສຢູ່ນຳເຜົ່າຂອງຢູດາ ແລະ ຢູ່ພາຍໃນຊາຍແດນອານາຈັກຂອງຢູດາ (ຢຊ 19:1–9; 1 ຂຄ 4:24–33). ເຜົ່າຂອງຊີເມໂອນໄດ້ເຂົ້າຮ່ວມກັບຢູດາ ໃນການເຮັດເສິກຕໍ່ຕ້ານຊາວການາອານ (ຜປ 1:3, 17). ຕໍ່ມາ ພວກເຂົາກໍໄດ້ເຂົ້າຮ່ວມກັບກອງທັບຂອງດາວິດນຳອີກ (1 ຂຄ 12:25).

**ຊີໂມນ ເປໂຕ.** *ເບິ່ງ* ເປໂຕ

**ຊີໂມນແຫ່ງການາອານ**

ໃນພຣະຄຳພີໃໝ່, ອັກຄະສາວົກດັ້ງເດີມຄົນໜຶ່ງໃນສິບສອງຄົນຂອງພຣະເຢຊູຄຣິດ (ມທ 10:2–4).

**ຊີເອສຣອມ**

ໃນພຣະຄຳພີມໍມອນ, ທະນາຍຄວາມໃນເມືອງອຳໂມນໄນຮາ. ແອວມາ ແລະ ແອມມິວເລັກ ໄດ້ເຫັນຜ່ານທາງພຣະວິນຍານວ່າ ຊີເອສຣອມ ຂີ້ຕົວະ. ຈາກນັ້ນ ລາວໄດ້ປ່ຽນໃຈເຫລື້ອມໃສພຣະກິດຕິຄຸນຂອງພຣະຄຣິດ (ແອວ 11:21–46; 15:1–12).

**ຊີດ.** *ເບິ່ງ* ຊາວຢາເຣັດ *ນຳອີກ*

ຜູ້ນຳ ຊາວ ຢາເຣັດ ຄົນ ໜຶ່ງ ໃນ ພຣະ ຄຳ ພີມໍມອນ. ລາວໄດ້ຖືກຂ້າໃນທ້າຍການສູ້ຮົບຄັ້ງທີ່ໄດ້ກວາດລ້າງຊາວຢາເຣັດໝົດທັງຊາດ (ອທ 14:17–15:31).

**ຊີວິດ.** *ເບິ່ງ* ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ຊີວິດນິລັນດອນ *ນຳອີກ*

ການເປັນຢູ່ທາງໂລກ ແລະ ທາງວິນຍານ ທີ່ເຮັດໃຫ້ເປັນໄປໄດ້ໂດຍອຳນາດຂອງພຣະເຈົ້າ.

ມື້ນີ້ ຂ້າພະເຈົ້າຈະໃຫ້ພວກເຈົ້າເລືອກເອົາລະຫວ່າງຊີວິດ ແລະ ຄວາມດີ, **ພບຍ** 30:15–20. ພຣະອົງກໍຈະໃຫ້ເຫັນທາງທີ່ນຳໄປສູ່ຊີວິດ,

**ພສສ** 16:11. ຄົນສັດຊື່ຈະໄດ້ຊີວິດຍືນຍາວ, **ສພສ** 21:21.

ຜູ້ທີ່ຮັກສາຊີວິດຂອງຕົນໄວ້ກໍຈະເສຍຊີວິດ: ແຕ່ຜູ້ທີ່ເສຍຊີວິດຂອງຕົນເພື່ອເຫັນແກ່ເຮົາກໍຈະໄດ້ຊີວິດ, **ມທ** 10:39 (ມທ 16:25; ມຣກ 8:35; ລກ 9:24; 17:33). ບຸດມະນຸດບໍ່ໄດ້ມາເພື່ອທຳລາຍຊີວິດມະນຸດ, ແຕ່ເພື່ອຊ່ວຍເຫລືອເຂົາໃຫ້ລອດ, **ລກ** 9:56. ພຣະທຳນັ້ນມີຊີວິດຢູ່ໃນພຣະອົງເອງ, ແລະ ຊີວິດນັ້ນເປັນຄວາມສະຫວ່າງຂອງມະນຸດ, **ຢຮ** 1:4. ຜູ້ໃດທີ່ວາງໃຈເຊື່ອໃນພຣະອົງຜູ້ທີ່ໃຊ້ເຮົາມາ ໄດ້ຜ່ານພົ້ນຈາກຄວາມຕາຍເຂົ້າສູ່ຊີວິດແລ້ວ, **ຢຮ** 5:24. ເຮົານີ້ແຫລະເປັນທາງນັ້ນ, ເປັນຄວາມຈິງ, ແລະ ເປັນຊີວິດ, **ຢຮ** 14:6. ຖ້າຄວາມຫວັງຂອງພວກເຮົາໃນພຣະຄຣິດມີຄຸນຄ່າພຽງແຕ່ສຳລັບຊີວິດນີ້ເທົ່ານັ້ນ, ພວກເຮົາກໍເປັນຄົນທີ່ໜ້າສັງເວດທີ່ສຸດ, **1 ກຣທ** 15:19–22. ການນັບຖືພຣະເຈົ້າໄດ້ຮັບພຣະສັນຍາອັນປະເສີດສຳລັບຊີວິດໃນປະຈຸບັນ ແລະ ໃນອະນາຄົດອີກດ້ວຍ, **1 ຕມທ** 4:8.

ລູກຫລານຂອງພວກເຮົາຈະມຸ້ງຫາຊີວິດນັ້ນຊຶ່ງມີຢູ່ໃນພຣະຄຣິດ, **2 ນຟ** 25:23–27. ຊີວິດນີ້ເປັນເວລາສຳລັບມະນຸດທີ່ຈະຕຽມພ້ອມເພື່ອພົບກັບພຣະເຈົ້າ, **ແອວ** 34:32 (ແອວ 12:24). ເຮົາເປັນຄວາມສະຫວ່າງ ແລະ ຊີວິດຂອງໂລກ, **3 ນຟ** 9:18 (ມຊຍ 16:9; 3 ນຟ 11:11; ອທ 4:12).

ຄົນທີ່ຊື່ສັດຍ່ອມເປັນສຸກ, ບໍ່ວ່າໃນຊີວິດຫລື ໃນຄວາມຕາຍ, **ຄພ** 50:5. ນີ້ແມ່ນຊີວິດນິລັນດອນ ທີ່ຈະຮູ້ຈັກພຣະເຈົ້າ ແລະ ພຣະເຢຊູຄຣິດ, **ຄພ** 132:24.

ນີ້ແມ່ນວຽກງານ ແລະ ລັດສະໝີພາບຂອງເຮົາ ຄືທີ່ຈະກໍ່ໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39.

**ຊີວິດກ່ອນເກີດ.** *ເບິ່ງ* ກອງປະຊຸມໃນສະຫວັນ; ສົງຄາມໃນສະຫວັນ; ຕອນຕົ້ນ; ມະນຸດ *ນຳອີກ*

ຊີວິດກ່ອນຊີວິດຢູ່ເທິງແຜ່ນດິນໂລກ. ຊາຍ ແລະ ຍິງທຸກຄົນໄດ້ອາໄສຢູ່ກັບພຣະເຈົ້າ ໃນຖານະລູກທາງວິນຍານຂອງພຣະອົງ ກ່ອນມາສູ່ໂລກເປັນມະນຸດມະຕະ. ບາງເທື່ອ ສິ່ງນີ້ຖືກເອີ້ນວ່າ ສະພາວະທຳອິດ (ອຣຮ 3:26).

ເມື່ອພຣະເຈົ້າສ້າງຈັກກະວານ, ພວກເທວະດາຂອງພຣະອົງກໍເປັ່ງສຽງໂຮຮ້ອງຍິນດີທັງນັ້ນ, **ໂຢບ** 38:4–7. ວິນຍານຂອງພວກເຮົາກໍຈະກັບຄືນໄປຫາພຣະເຈົ້າ ຜູ້ປະທານໃຫ້ນັ້ນ, **ປຍຈ** 12:7. ເຮົາໄດ້ໃຫ້ຊີວິດແກ່ເຈົ້າ ກ່ອນເຈົ້າໄດ້ເກີດມາ, **ຢມຢ** 1:4–5.

ພວກເຮົາເປັນເຊື້ອສາຍຂອງພຣະອົງ, **ກຈກ** 17:28. ພຣະອົງໄດ້ເລືອກພວກເຮົາໄວ້ຕັ້ງແຕ່ກ່ອນການວາງຮາກຖານຂອງໂລກ, **ອຟຊ** 1:3–4. ພວກເຮົາຄວນຢູ່ໃຕ້ບັງຄັບຂອງພຣະບິດາແຫ່ງບັນດາວິນຍານຈິດ, **ຮຣ** 12:9. ບັນດາທູດທີ່ບໍ່ໄດ້ຮັກສາສະພາວະທຳອິດຂອງຕົນ, ຖືກລ່າມໂສ້ໄວ້ເປັນນິດ, **ຢດ** 1:6 (ອຣຮ 3:26). ມານ ແລະ ບໍລິວານຂອງມັນ ຖືກຊັດຖິ້ມລົງເສຍ, **ພນມ** 12:9.

ເຂົາເຈົ້າໄດ້ຖືກເອີ້ນ ແລະ ຖືກຕຽມໄວ້ນັບຕັ້ງແຕ່ການວາງຮາກຖານຂອງໂລກ, **ແອວ** 13:3.

ພຣະເຢຊູຄຣິດຫລຽວເບິ່ງຄວາມກວ້າງໃຫຍ່ໄພສານຂອງຊົ່ວນິລັນດອນ ແລະ ເຫລົ່າທູດສະຫວັນທັງໝົດ ກ່ອນໂລກໄດ້ຖືກສ້າງຂຶ້ນ, **ຄພ** 38:1. ມະນຸດກໍໄດ້ຢູ່ກັບພຣະເຈົ້າໃນຕອນຕົ້ນຄືກັນ, **ຄພ** 93:29 (ຣລມ 14:17; ຄພ 49:17). ວິນຍານທີ່ສູງສັກ ໄດ້ຖືກເລືອກໄວ້ແຕ່ຕອນຕົ້ນໃຫ້ເປັນຜູ້ປົກຄອງໃນສາດສະໜາຈັກ, **ຄພ** 138:53–55. ຫລາຍຄົນໄດ້ຮັບບົດຮຽນທຳອິດຂອງພວກເພິ່ນຢູ່ໃນໂລກວິນຍານ, **ຄພ** 138:56.

ທຸກສິ່ງທັງປວງໄດ້ຖືກສ້າງທາງວິນຍານກ່ອນມັນຈະເປັນຢູ່ເທິງແຜ່ນດິນໂລກ, **ມຊ** 3:5. ເຮົາໄດ້ສ້າງໂລກ, ແລະ ມະນຸດກ່ອນພວກເຂົາເປັນຢູ່ໃນເນື້ອໜັງ, **ມຊ** 6:51. ອັບຣາຮາມໄດ້ເຫັນຜູ້ຄົນທີ່ມີຄວາມຮູ້ແຈ້ງ ຊຶ່ງຖືກຈັດໄວ້ກ່ອນໂລກເປັນມາ, **ອຣຮ** 3:21–24.

**ຊີວິດນິລັນດອນ.** *ເບິ່ງ* ສູງສົ່ງ, ຄວາມສູງສົ່ງ; ຊີວິດ; ຊົດໃຊ້, ການຊົດໃຊ້; ມົງກຸດ, ສວມມົງກຸດ; ລັດສະໝີພາບຂອງຊັ້ນສູງ *ນຳອີກ*

ທີ່ຈະມີຊີວິດຕະຫລອດການເປັນຄອບຄົວ

ໃນທີ່ປະທັບຂອງພຣະເຈົ້າ (ຄພ 132:19–20, 24, 55). ຊີວິດນິລັນດອນເປັນຂອງປະທານອັນຍິ່ງໃຫຍ່ທີ່ສຸດສຳລັບມະນຸດ.

ພຣະອົງເປັນຜູ້ມີຖ້ອຍຄຳແຫ່ງຊີວິດນິລັນດອນ, **ຢຮ** 6:68. ນີ້ແມ່ນຊີວິດນິລັນດອນ, ຄືໃຫ້ພວກເຂົາຮູ້ຈັກພຣະອົງຜູ້ເປັນພຣະເຈົ້າທ່ຽງແທ້ແຕ່ອົງດຽວ, ແລະ ຮູ້ຈັກພຣະເຢຊູຄຣິດ, **ຢຮ** 17:3 (ຄພ 132:24). ຈົ່ງອົດທົນຕໍ່ສູ້ຈົນສຸດກຳລັງແຫ່ງຄວາມເຊື່ອ ແລະ ຍຶດເອົາຊີວິດນິລັນດອນ, **1 ຕມທ** 6:12.

ມະນຸດເປັນອິດສະລະທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ, **2 ນຟ** 2:27 (ຮລມ 14:31). ການມີຈິດໃຈທີ່ສະແຫວງຫາສິນທຳຄືຊີວິດນິລັນດອນ, **2 ນຟ** 9:39. ແລ້ວພວກທ່ານຢູ່ໃນທາງແຄບນີ້ຊຶ່ງນຳໄປຫາຊີວິດນິລັນດອນ, **2 ນຟ** 31:17–20. ການເຊື່ອໃນພຣະຄຣິດ ແລະ ອົດທົນຈົນເຖິງທີ່ສຸດ ຄືຊີວິດນິລັນດອນ, **2 ນຟ** 33:4 (3 ນຟ 15:9).

ຄົນທີ່ມີຊີວິດນິລັນດອນເປັນຄົນທີ່ຮັ່ງມີ, **ຄພ** 6:7 (ຄພ 11:7). ຊີວິດນິລັນດອນເປັນຂອງປະທານອັນຍິ່ງໃຫຍ່ທີ່ສຸດໃນຂອງປະທານທັງໝົດຂອງພຣະເຈົ້າ, **ຄພ** 14:7 (ຣມ 6:23). ຄົນຊອບທຳຈະໄດ້ຮັບສັນຕິສຸກໃນໂລກນີ້ ແລະ ຊີວິດນິລັນດອນໃນໂລກທີ່ຈະມາເຖິງ, **ຄພ** 59:23. ຜູ້ທີ່ອົດທົນຈົນເຖິງທີ່ສຸດຈະໄດ້ສວມມົງກຸດແຫ່ງຊີວິດນິລັນດອນ, **ຄພ** 66:12 (ຄພ 75:5). ທຸກຄົນທີ່ຕາຍປາດສະຈາກພຣະກິດຕິຄຸນ ຜູ້ທີ່ຈະຮັບມັນໄວ້ຖ້າເຂົາເຈົ້າມີຊີວິດຢູ່ເປັນຜູ້ຮັບມູນມໍລະດົກຂອງອານາຈັກຊັ້ນສູງ, **ຄພ** 137:7–9.

ວຽກງານ ແລະ ລັດສະໝີພາບຂອງພຣະເຈົ້າຄືການທີ່ຈະເຮັດໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39. ພຣະເຈົ້າມອບຊີວິດນິລັນດອນໃຫ້ແກ່ຄົນທີ່ເຊື່ອຟັງ, **ມຊ** 5:11.

**ຊີວິດອັນເປັນນິດ.** *ເບິ່ງ* ຊີວິດນິລັນດອນ

**ຊີໂອນ.** *ເບິ່ງ* ເຢຣູຊາເລັມໃໝ່; ເອນົກ *ບຳອິກ*

ຜູ້ທີ່ມີໃຈບໍລິສຸດ (ຄພ 97:21). ຊີໂອນຍັງໝາຍເຖິງ ສະຖານທີ່ຂອງຜູ້ທີ່ມີໃຈບໍລິສຸດອາໄສຢູ່. ເມືອງທີ່ເອນົກ ແລະ ຜູ້ຄົນຂອງເພິ່ນໄດ້ສ້າງຂຶ້ນ ແລະ ໃນທີ່ສຸດໄດ້ຖືກຍົກຂຶ້ນສະຫວັນເພາະຄວາມຊອບທຳ ຈຶ່ງຖືກເອີ້ນວ່າ ຊີໂອນ (ຄພ 38:4; ມຊ 7:18–21, 69). ໃນຍຸກສຸດທ້າຍ ເມືອງທີ່ຊື່ວ່າ ຊີໂອນ ຈະຖືກສ້າງຂຶ້ນໃກ້ ເຂດແຈັກສັນ, ລັດມີເຊີຣີ (ສະຫະລັດອາເມຣິກາ), ຊຶ່ງເຜົ່າອິດສະຣາເອນຈະເຕົ້າໂຮມໃນທີ່ນັ້ນ (ຄພ 103:11–22; 133:18). ໄພ່ພົນຂອງພຣະເຈົ້າໄດ້ຖືກແນະນຳໃຫ້ສ້າງເມືອງຊີໂອນຂຶ້ນ ບ່ອນໃດກໍຕາມທີ່ເຂົາເຈົ້າອາໄສຢູ່ໃນໂລກ.

ເມືອງຂອງດາວິດໄດ້ຖືກເອີ້ນວ່າ ຊີໂອນ, **1 ກສ** 8:1. ຄຳສັ່ງສອນມາຈາກພູເຂົາຊີໂອນ, **ອຊຢ** 2:2–3 (ມກ 4:2; 2 ນຟ 12:2–3). ພຣະຜູ້ໄຖ່ຈະມາຫາຊີໂອນ, **ອຊຢ** 59:20. ເຮົາຈະເອົາຄົນໜຶ່ງໃນພວກເຈົ້າຈາກແຕ່ລະເມືອງ, ແລະ ສອງຄົນຈາກແຕ່ລະຕະກຸນ, ແລະ ເຮົາຈະນຳພວກເຈົ້າກັບຄືນມາຍັງພູຊີໂອນ, **ຢມຢ** 3:14. ໃນພູຊີໂອນ ແລະ ໃນເຢຣູຊາເລັມ ຈະໄດ້ຮັບການປົດປ່ອຍ, **ຢອ** 2:32 (ອບຢ 1:17).

ພວກທີ່ພະຍາຍາມໄປຫາຊີໂອນຂອງເຮົາໃນມື້ນັ້ນຈະມີຄວາມສຸກ, **1 ນຟ** 13:37. ລູກສາວຂອງຊີໂອນ ເປັນຄົນຈອງຫອງ, **2 ນຟ** 13:16 (ອຊຢ 3:16). ວິບັດແກ່ຜູ້ຊຶ່ງຢູ່ຢ່າງບໍ່ທຸກຮ້ອນໃນຊີໂອນ, **2 ນຟ** 28:19–25.

ສະແຫວງທີ່ຈະນຳ ແລະ ສະຖາປະນາອຸດົມການຂອງຊີໂອນ, **ຄພ** 6:6 (ຄພ 11:6). ລາວຜູ້ທີ່ເຮົາໄດ້ດົນໃຈໃຫ້ນຳພາອຸດົມການຂອງຊີໂອນໄປໜ້າ ໃນອຳນາດອັນຍິ່ງໃຫຍ່ເພື່ອຄວາມດີ, **ຄພ** 21:7. ເຢຣູຊາເລັມໃໝ່ ຈະຖືກເອີ້ນວ່າ ຊີໂອນ, **ຄພ** 45:66–67. ເມືອງອິນດີເພັນເດັນ, ລັດມີເຊີຣີ, ເປັນສະຖານທີ່ສຳລັບເມືອງຊີໂອນ, **ຄພ** 57:1–3. ການຂ້ຽນຕີຈະຖອກເທລົງມາເທິງລູກຫລານຂອງຊີໂອນ ຈົນກວ່າພວກເຂົາຈະກັບໃຈ, **ຄພ** 84:58.

ພຣະຜູ້ເປັນເຈົ້າໄດ້ເອີ້ນຜູ້ຄົນຂອງພຣະອົງວ່າ ຊີໂອນ, ເພາະວ່າພວກເຂົາມີໃຈດຽວ ແລະ ມີຄວາມຄິດດຽວ, **ມຊ** 7:18–19. ຊີໂອນ (ເຢຣູຊາເລັມໃໝ່) ຈະຖືກສ້າງຂຶ້ນໃນທະວີບອາເມຣິກາ, **ຫຼຊ** 1:10.

**ຊື່ຂອງສາດສະໜາຈັກ.** *ເບິ່ງ* ສາດສະໜາຈັກ, ຊື່ຂອງ; ສາດສະໜາຈັກຂອງພຣະເຢຊູ ຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

**ຊື່ສັດ, ຄວາມຊື່ສັດ.** *ເບິ່ງ* ຊອບທຳ, ຄວາມ ຊອບທຳ *ນຳອີກ*

ຄວາມຊອບທຳ, ຄວາມຊື່ສັດ, ແລະ ຄວາມ ຈິງໃຈ. ຄືການ ຈິງໃຈ, ຊື່ສັດ, ແລະ ປາດສະ ຈາກຄວາມຫລອກລວງ.

ຂ້ອຍຈະ ຢືນ ຢັນວ່າຂ້ອຍບໍ່ຜິດຈົນເທົ່າມື້ ຕາຍ, **ໂຢບ** 27:5. ຄົນທີ່ຮັກສາວາຈາ ພຣະຜູ້ ເປັນເຈົ້າພໍໃຈຍິ່ງ, **ສພສ** 12:22. ຊາຍທີ່ຊື່ສັດ ຈະເຮັດໃນສິ່ງທີ່ຖືກຕ້ອງ, **ສພສ** 20:7. ຈົ່ງເຮັດ ຕາມຄຳສັນຍາທີ່ທ່ານວ່າຈະເຮັດ, **ປຍຈ** 5:4–5.

ພວກເຮົາໄດ້ປະຖິ້ມສິ່ງທີ່ໜ້າອັບອາຍທຸກ ຢ່າງ ທີ່ເຮັດໃນທີ່ລັບລີ້, **2 ກຣທ** 4:1–2. ຈົ່ງດຳ ເນີນຊີວິດອັນດີງາມ, **1 ປຕ** 2:12.

ວິບັດແກ່ຄົນຂີ້ຕົວະ, ເພາະເຂົາຈະຖືກໂຍນ ລົງນະລົກ, **2 ນຟ** 9:34. ພຣະວິນຍານກ່າວ ດ້ວຍຄວາມຈິງ ແລະ ບໍ່ຕົວະ, **ຢຄ** 4:13. ຜູ້ ໃດກໍຕາມທີ່ຂໍຢືມຈາກເພື່ອນບ້ານຂອງຕົນ ກໍ ຄວນສົ່ງຄືນຂອງທີ່ຕົນຢືມມາ, **ມຊຢ** 4:28 (ຄພ 136:25). ຈົ່ງເບິ່ງວ່າລູກປະຕິບັດໂດຍທ່ຽງທຳ, ຕັດສິນໂດຍຊອບທຳ, ແລະ ກະທຳຄວາມດີ, **ແອວ** 41:14. ພວກເຂົາເປັນຄົນທີ່ເອົາການເອົາ ງານຢູ່ຕະຫລອດວັນເວລາ ບໍ່ວ່າອັນໃດກໍຕາມ ທີ່ພວກເຂົາໄດ້ຮັບມອບໝາຍ, **ແອວ** 53:20.

ໃຫ້ທຸກຄົນປະຕິບັດຕໍ່ກັນຢ່າງຊື່ສັດ, **ຄພ** 51:9. ທຸກຄົນທີ່ຮູ້ວ່າຫົວໃຈຂອງພວກເຂົາຊື່ ສັດ ກໍໄດ້ຮັບການຍອມຮັບຈາກເຮົາ, **ຄພ** 97:8. ຄວນສະແຫວງຫາຊາຍທີ່ຊື່ສັດ, ສະຫລາດ, ແລະ ສຳລັບຕຳແໜ່ງທາງການເມືອງ, **ຄພ** 98:4–10. ພຣະຜູ້ເປັນເຈົ້າຮັກໄຮຣຳ ສະມິດ ເພາະຄວາມຊື່ສັດຂອງໃຈລາວ, **ຄພ** 124:15. ຈົ່ງພະຍາຍາມຢ່າງພາກພຽນເພື່ອຊອກຫາ ສິ່ງທີ່ເພື່ອນບ້ານຂອງພວກເຈົ້າເຮັດເສຍ, **ຄພ** 136:26.

ພວກເຮົາເຊື່ອໃນການເປັນຄົນສັດຊື່, **ຫຼຊ** 1:13.

**ຊື່ນຊົມ, ຄວາມຊື່ນຊົມ.** *ເບິ່ງ* ເຊື່ອຟັງ, ການ ເຊື່ອຟັງ, ຟັງຄວາມ *ນຳອີກ*

ສະພາບຂອງຄວາມສຸກອັນຍິ່ງໃຫຍ່ທີ່ມາ ຈາກການດຳລົງຊີວິດທີ່ຊອບທຳ. ຈຸດປະສົງ ຂອງຊີວິດມະຕະແມ່ນເພື່ອໃຫ້ທຸກຄົນມີຄວາມ ຊື່ນຊົມ (2 ນຟ 2:22–25). ຄວາມຊື່ນຊົມອັນ ເຕັມສ່ວນຈະມາເຖິງພຽງແຕ່ຜ່ານທາງພຣະ ເຢຊູຄຣິດເທົ່ານັ້ນ (ຢຮ 15:11; ຄພ 93:33–34; 101:36).

ຄົນອ່ອນໂຍນຈະພົບຄວາມສຸກອີກເທື່ອ ໜຶ່ງໃນພຣະຜູ້ເປັນເຈົ້າ, **ອຊຢ** 29:19 (2 ນຟ 27:30).

ເຮົານຳຂ່າວປະເສີດມາບອກໃຫ້ພວກເຈົ້າຮູ້, **ລກ** 2:10. ຄວາມຊື່ນຊົມຍິນດີຂອງພວກເຈົ້າ ບໍ່ມີຜູ້ໃດສາມາດເອົາໄປຈາກພວກເຈົ້າໄດ້, **ຢຮ** 16:22. ຜົນຂອງພຣະວິນຍານຄືຄວາມຮັກ, ຄວາມຍິນດີ, ສັນຕິສຸກ, **ຄລຕ** 5:22.

ໝາກໄມ້ຈາກຕົ້ນນັ້ນໄດ້ເຮັດໃຫ້ຈິດວິນຍານ ຂອງພໍ່ເຕັມໄປດ້ວຍຄວາມຊື່ນຊົມຢ່າງໃຫຍ່ ຫລວງ, **1 ນຟ** 8:12. ມະນຸດເປັນຢູ່ກໍເພື່ອພວກ ເຂົາຈະໄດ້ມີຄວາມສຸກ, **2 ນຟ** 2:25. ຄວາມ ສຸກຂອງຄົນຊອບທຳຈະບໍລິບູນຕະຫລອດ ໄປ, **2 ນຟ** 9:18. ເຂົາຈະໄດ້ຢູ່ກັບພຣະເຈົ້າໃນ ສະພາບແຫ່ງຄວາມສຸກທີ່ບໍ່ມີວັນສິ້ນສຸດ, **ມຊຢ** 2:41. ຂ້າພະເຈົ້າຈະສະລະທຸກສິ່ງທຸກຢ່າງທີ່ ຂ້າພະເຈົ້າເປັນເຈົ້າຂອງ ເພື່ອວ່າຂ້າພະເຈົ້າ ຈະໄດ້ຮັບຄວາມຜາສຸກອັນຍິ່ງໃຫຍ່ນີ້, **ແອວ** 22:15. ບາງທີຂ້າພະເຈົ້າອາດຈະເປັນເຄື່ອງ ມືໃນພຣະຫັດຂອງພຣະເຈົ້າ ໃນການນຳຈິດ ວິນຍານດວງໜຶ່ງມາສູ່ ການກັບໃຈ, ແລະ ນີ້ ຄືຄວາມສຸກຂອງຂ້າພະເຈົ້າ, **ແອວ** 29:9. ພໍ່ບໍ່ ເຄີຍເຫັນຄວາມສຸກ ແລະ ຄວາມສະຫວ່າງອັນ ໃດທີ່ໜ້າອັດສະຈັນເຊັ່ນນີ້, **ແອວ** 36:20.

ວິນຍານຂອງເຮົາຈະເຮັດໃຫ້ຈິດວິນຍານ ຂອງເຈົ້າເຕັມໄປດ້ວຍຄວາມສຸກ, **ຄພ** 11:13. ຄວາມຊື່ນຊົມຂອງພວກເຈົ້າຈະຍິ່ງໃຫຍ່ພຽງ ໃດນຳເຂົາໃນອານາຈັກຂອງພຣະບິດາຂອງ ເຮົາ, **ຄພ** 18:15–16. ໃນໂລກນີ້ຄວາມສຸກ ຂອງພວກເຈົ້າບໍ່ບໍລິບູນ, ແຕ່ໃນເຮົາຄວາມສຸກ ຂອງພວກເຈົ້າບໍລິບູນ, **ຄພ** 101:36.

ໃນຊີວິດນີ້ຂ້າພຣະອົງຈະມີຄວາມສຸກ, **ມຊ** 5:10–11.

**ເຊດ.** *ເບິ່ງ* ອາດາມ *ບຳອິກ*

ໃນພຣະຄຳພີເດີມ, ລູກຊາຍທີ່ຊອບທຳຂອງ ອາດາມ ແລະ ເອວາ.

ເຊດເປັນຄົນດີ, ແລະ ລັກສະນະຂອງລາວ ເປັນເໝືອນລັກສະນະຂອງບິດາຂອງລາວ, **ຄພ** 107:42–43 (ປຖກ 5:3). ເຊດເປັນຄົນໜຶ່ງ ໃນບັນດາຜູ້ຄົນທີ່ຍິ່ງໃຫຍ່ ຢູ່ໃນໂລກວິນຍານ, **ຄພ** 138:40.

ພຣະເຈົ້າໄດ້ເປີດເຜີຍພຣະອົງເອງຕໍ່ເຊດ, **ມຊ** 6:1–3, 8–14.

**ເຊມ.** *ເບິ່ງ* ໂນອາ, ປິຕຸໃນພຣະຄຣິສຕະທຳ ຄຳພີ *ບຳອິກ*

ໃນພຣະຄຳພີເດີມ, ລູກຊາຍທີ່ຊອບທຳຂອງ ໂນອາ ແລະ ອີງຕາມທີ່ບອກເລົ່າກັນມາ, ເປັນ ບັນພະບຸລຸດຂອງຊາວເຊມ, ລວມທັງຊາວ ອາຣັບ, ຊາວເຮັບເຣີ, ຊາວບາບີໂລນ, ຊາວ ຊີເຣຍ, ຊາວໂປນີເຊຍ, ຊາວອັດຊີເຣຍ (ປຖກ 5:29–32; 6:10; 7:13; 9:26; 10:21–32; ມຊ 8:12). ໃນການເປີດເຜີຍຍຸກສຸດທ້າຍ, ເຊມ ຖືກກ່າວເຖິງວ່າເປັນ "ມະຫາປະໂລຫິດທີ່ຍິ່ງ ໃຫຍ່" (ຄພ 138:41).

**ເຊເດກີຢາ.** *ເບິ່ງ* ມິວເລັກ *ບຳອິກ*

ໃນພຣະຄຳພີເດີມ, ກະສັດອົງສຸດທ້າຍຂອງ ຢູດາ (2 ກສ 24:17–20; 25:2–7). ເຊເດກີຢາ ໄດ້ເອົາສາດສະດາເຢເຣມີຢາເຂົ້າຄຸກ (ຢມຢ 32:1–5), ແລະ ເຢເຣມີຢາໄດ້ທຳນາຍກ່ຽວກັບ ການໄປເປັນຊະເລີຍຂອງເຊເດກີຢາ (ຢມຢ 34:2–8, 21). ລີໄຮ ແລະ ຄອບຄົວຂອງເພິ່ນ ໄດ້ອາໄສຢູ່ເຢຣູຊາເລັມ ລະຫວ່າງ ປີທຳອິດ ຂອງການປົກຄອງຂອງເຊເດກີຢາ (1 ນຟ 1:4). ລູກຊາຍທຸກຄົນຂອງເຊເດກີຢາ ນອກ ຈາກຄົນດຽວ ໄດ້ຖືກຂ້າຕາຍໝົດ; ລູກຊາຍ ຂອງເພິ່ນຊື່ ມິວເລັກ ໄດ້ໜີໄປຫາຊີກໂລກ ເບື້ອງຕາເວັນຕົກ (ຢມຢ 52:10; ອມນ 1:15; ຮລມ 8:21).

**ເຊຣາເຮັມລາ.** *ເບິ່ງ* ມິວເລັກ; ອຳໂມນ, ຜູ້ ເປັນເຊື້ອສາຍຂອງເຊຣາເຮັມລາ *ບຳອິກ*

ໃນພຣະຄຳພີມໍມອນ, ເຊຣາເຮັມລາໝາຍ ເຖິງ (1) ຊາຍຄົນໜຶ່ງທີ່ນຳພາຜູ້ຄົນຂອງ ມິວເລັກ, (2) ຊື່ຂອງເມືອງ ຕັ້ງຕາມຊື່ຂອງ ລາວ, (3) ແຜ່ນດິນເຊຣາເຮັມລາ, ຫລື (4) ຜູ້ ຄົນທີ່ຕິດຕາມລາວ.

ຊາວເຊຣາເຮັມລາຊື່ນຊົມທີ່ພຣະຜູ້ເປັນເຈົ້າ ໄດ້ສົ່ງຊາວນີໄຟມາ, **ອມນ** 1:14. ຊາວເຊຣາ ເຮັມລາໄດ້ໃຫ້ລຳດັບການສືບເຊື້ອສາຍຂອງ ບັນພະບຸລຸດ, **ອມນ** 1:18. ອຳໂມນເປັນຜູ້ສືບ ຕະກຸນຂອງເຊຣາເຮັມລາ, **ມຊຢ** 7:3, 13. ສາດ ສະໜາຈັກໄດ້ຖືກສ້າງຕັ້ງຂຶ້ນຢູ່ໃນເມືອງເຊຣາ ເຮັມລາ, **ແອວ** 5:2. ເພາະຄົນຊອບທຳ ຄົນຊົ່ວ ຈຶ່ງລອດໃນເຊຣາເຮັມລາ, **ຮລມ** 13:12. ເມືອງ ເຊຣາເຮັມລາໄດ້ຖືກເຜົາໄໝ້ ຕອນພຣະຄຣິດ ສິ້ນພຣະຊົນ, **3 ນຟ** 8:8, 24.

**ເຊເຣັມ.** *ເບິ່ງ* ຜູ້ຕໍ່ຕ້ານພຣະຄຣິດ *ບຳອິກ*

ຊາຍຄົນໜຶ່ງໃນພຣະຄຳພີມໍມອນ ຜູ້ໄດ້ປະ ຕິເສດພຣະຄຣິດ ແລະ ຢາກເຫັນເຄື່ອງໝາຍ (ຢຄ 7:1–20).

**ແຊມ.** *ເບິ່ງ* ລີໄຮ, ບິດາຂອງນີໄຟ *ບຳອິກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນທີສາມ ຂອງລີໄຮ (1 ນຟ 2:5). ລາວເປັນຄົນທ່ຽງທຳ ແລະ ເປັນຊາຍທີ່ສັກສິດ ຜູ້ໄດ້ເລືອກຕິດຕາມ ພຣະຜູ້ເປັນເຈົ້າ (1 ນຟ 2:17; 2 ນຟ 5:5–6; ແອວ 3:6).

**ແຊມຊັນ**

ໃນພຣະຄຳພີເດີມ, "ຜູ້ຕັດສິນ" ຄົນທີສິບ ສອງຂອງອິດສະຣາເອນ. ລາວເປັນທີ່ຮູ້ຈັກ ກັນດີ ເລື່ອງກຳລັງວັງຊາຂອງລາວ, ແຕ່ລາວບໍ່ ສະຫລາດເລື່ອງການຕັດສິນໃຈ ແລະ ການກະ ທຳທາງສິນທຳ (ຜປ 13:24–16:31).

**ຊົດໃຊ້, ການຊົດໃຊ້.** *ເບິ່ງ* ກັບໃຈ, ການກັບ ໃຈ; ການຕົກຂອງອາດາມ ແລະ ເອວາ; ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ຄືງ, ການຄືງ; ເຄັດເຊມາເນ; ສິນລະລຶກ;

ເສຍສະລະ, ການເສຍສະລະ; ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ; ໄຖ່, ການໄຖ່, ຖືກໄຖ່; ບຸດ ແລະ ທິດາຂອງພຣະເຈົ້າ; ປົດບາບ, ການປົດບາບ; ແຜນແຫ່ງການໄຖ່; ພຣະຄຸນ; ພຣະເຢຊູຄຣິດ; ເມດຕາ, ມີເມດຕາ, ຄວາມເມດຕາ; ໄມ້ກາງແຂນ; ລູກໆຂອງພຣະຄຣິດ; ລອດ, ຄວາມລອດ; ເລືອດ, ໂລຫິດ; ອະໄພ, ໃຫ້ອະໄພ; ອະມະຕະ, ຄວາມເປັນອະມະຕະ; ຮັບຮອງ, ການຮັບຮອງ *ນຳອີກ*

ການເຮັດໃຫ້ມະນຸດຄືນດີນຳພຣະເຈົ້າ.

ດັ່ງທີ່ໃຊ້ຢູ່ໃນພຣະຄຳພີ, ການຊົດໃຊ້ແມ່ນການຮັບເອົາໂທດສຳລັບການເຮັດບາບ, ຊຶ່ງໂດຍການນັ້ນຈຶ່ງໄດ້ຍົກບາບອອກຈາກຄົນບາບທີ່ກັບໃຈ ແລະ ອະນຸຍາດໃຫ້ເຂົາຄືນດີນຳພຣະເຈົ້າ. ພຣະເຢຊູຄຣິດເທົ່ານັ້ນທີ່ສາມາດເຮັດການຊົດໃຊ້ອັນບໍລິບູນສຳລັບມະນຸດຊາດທັງປວງ. ພຣະອົງສາມາດເຮັດເຊັ່ນນັ້ນໄດ້ ເພາະວ່າພຣະອົງໄດ້ຖືກເລືອກ ແລະ ຖືກແຕ່ງຕັ້ງໄວ້ແລ້ວໃນກອງປະຊຸມມະຫາສານກ່ອນໂລກນີ້ໄດ້ຖືກສ້າງຂຶ້ນ (ອທ 3:14; ມຊ 4:1–2; ອຣຣ 3:27), ການເປັນພຣະບຸດແຫ່ງສະຫວັນຂອງພຣະອົງ, ແລະ ຊີວິດທີ່ປາດສະຈາກບາບຂອງພຣະອົງ. ການຊົດໃຊ້ຂອງພຣະອົງລວມທັງການຮັບທຸກທໍລະມານສຳລັບບາບຂອງມວນມະນຸດ, ການຫລັ່ງໂລຫິດຂອງພຣະອົງ, ແລະ ການສິ້ນພຣະຊົນຂອງພຣະອົງ ແລະ ການຟື້ນຄືນພຣະຊົນຈາກຫລຸມຝັງສົບ (ອຊຢ 53:3–12; ລກ 22:44; ມຊຢ 3:5–11; ແອວ 7:10–13; ຄພ 19:16–19). ເພາະການຊົດໃຊ້ນັ້ນ, ທຸກຜູ້ຄົນຈະລຸກຂຶ້ນຈາກຄວາມຕາຍດ້ວຍຮ່າງກາຍທີ່ເປັນອະມະຕະ (1 ກຣທ 15:22). ການຊົດໃຊ້ຍັງຈັດທາງໄວ້ສຳລັບເຮົານຳອີກເພື່ອຮັບການໃຫ້ອະໄພຈາກບາບຂອງເຮົາ ແລະ ມີຊີວິດຢູ່ກັບພຣະເຈົ້າຕະຫລອດການ. ແຕ່ຄົນທີ່ມີອາຍຸເຖິງກະສຽນທີ່ຈະຮັບຜິດຊອບ ແລະ ໄດ້ຮັບກົດ ສາມາດໄດ້ຮັບພອນເຫລົ່ານີ້ ພຽງແຕ່ຖ້າຫາກເຂົາມີສັດທາໃນພຣະເຢຊູຄຣິດ, ກັບໃຈຈາກບາບຂອງເຂົາ, ຮັບພິທີການແຫ່ງຄວາມລອດ, ແລະ ເຊື່ອຟັງຕໍ່ພຣະບັນຍັດຂອງພຣະເຈົ້າ. ຄົນທີ່ມີອາຍຸບໍ່ເຖິງກະສຽນທີ່ຈະຮັບຜິດຊອບ ແລະ ຄົນທີ່ປາດສະຈາກກົດຈະຖືກໄຖ່ຜ່ານການຊົດໃຊ້ (ມຊຢ 15:24–25; ມຣນ 8:22). ພຣະຄຳພີສິດສອນຢ່າງແຈ່ມແຈ້ງວ່າ ຖ້າຫາກພຣະຄຣິດບໍ່ໄດ້ຊົດໃຊ້ແທນບາບຂອງເຮົາ, ແລ້ວບໍ່ມີກົດ, ພິທີການ, ຫລື ການເສຍສະລະໃດ ຈະສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຄວາມຍຸດຕິທຳໄດ້, ແລະ ມະນຸດບໍ່ສາມາດຢູ່ໃນທີ່ປະທັບຂອງພຣະເຈົ້າໄດ້ອີກ (2 ນຟ 2; 9).

ນີ້ແຫລະແມ່ນເລືອດຂອງເຮົາ, ຊຶ່ງເປັນເລືອດທີ່ຫລັ່ງໄຫລອອກສຳລັບຄົນຈຳນວນຫລາຍເພື່ອການບາບຈະໄດ້ຮັບການອະໄພ, **ມທ** 26:28. ເຫື່ອຂອງພຣະອົງຄືກັບວ່າ ເປັນເລືອດໄຫລຢາດລົງດິນເປັນເມັດໃຫຍ່, **ລູກາ** 22:39–44. ນັ້ນແມ່ນເນື້ອກາຍຂອງເຮົາເອງ ຊຶ່ງເຮົາໃຫ້ເພື່ອວ່າໂລກຈະໄດ້ມີຊີວິດຢູ່, **ໂຢຮັນ** 6:51. ເຮົານີ້ແຫລະທີ່ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ, **ໂຢຮັນ** 11:25. ພຣະຄຣິດນັ້ນເປັນຕົ້ນກຳເນີດແຫ່ງຄວາມລອດພົ້ນອັນຕະຫລອດໄປເປັນນິດແກ່ຄົນທັງປວງທີ່ເຊື່ອຟັງ, **ຮຣ** 5:9. ເຮົາໄດ້ຮັບການຊຳລະໃຫ້ບໍລິສຸດໂດຍການຫລັ່ງໂລຫິດຂອງພຣະຄຣິດ, **ຮຣ** 9; 10:1–10. ພຣະຄຣິດກໍເໝືອນກັນໄດ້ຮັບທຸກທໍລະມານຄັ້ງໜຶ່ງແທນຄວາມຜິດບາບ, **1 ເປໂຕ** 3:18. ໂລຫິດຂອງພຣະເຢຊູຄຣິດກໍຊຳລະເຮົາທັງຫລາຍຈາກບາບກຳທັງສິ້ນ, **1 ຢຮ** 1:7.

ພຣະອົງຖືກຍົກຂຶ້ນເທິງໄມ້ກາງແຂນ ແລະ ຖືກປະຫານເພື່ອບາບຂອງໂລກ, **1 ນຟ** 11:32–33. ການໄຖ່ມາເຖິງຄົນທີ່ມີໃຈຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດ, **2 ນຟ** 2:3–10, 25–27. ພຣະອົງໄດ້ຖວາຍພຣະອົງເອງໃຫ້ເປັນເຄື່ອງບູຊາເພື່ອບາບ, **2 ນຟ** 2:7. ການຊົດໃຊ້ໄຖ່ມະນຸດຈາກການຕົກ ແລະ ຊ່ວຍເຂົາເຈົ້າໃຫ້ລອດຈາກຄວາມຕາຍ ແລະ ນະລົກ, **2 ນຟ** 9:5–24. ຈຳຕ້ອງມີການຊົດໃຊ້ອັນບໍ່ມີຂອບເຂດ, **2 ນຟ** 9:7. ຈົ່ງຄືນດີກັບພຣະເຈົ້າທາງການຊົດໃຊ້ຂອງພຣະຄຣິດ, **ຢຄ** 4:11. ໂລຫິດຂອງພຣະອົງຊົດໃຊ້ແທນບາບຂອງຜູ້

ທີ່ເຮັດບາບໂດຍບໍ່ຮູ້, **ມຊຢ** 3:11–18. ມະນຸດໄດ້ຮັບຄວາມລອດໂດຍຜ່ານທາງການຊົດໃຊ້, **ມຊຢ** 4:6–8. ຖ້າຫາກບໍ່ແມ່ນການຊົດໃຊ້, ພວກເຂົາກໍຕ້ອງຕາຍຢ່າງຫລີກລ້ຽງບໍ່ໄດ້, **ມຊຢ** 13:27–32. ພຣະອົງຈະຊົດໃຊ້ເພື່ອບາບຂອງໂລກ, **ແອວ** 34:8–16. ພຣະເຈົ້າເອງຈຶ່ງຊົດໃຊ້ເພື່ອບາບຂອງໂລກ, ເພື່ອນຳແຜນແຫ່ງຄວາມເມດຕາມາໃຫ້, **ແອວ** 42:11–30. ເຮົາຄືພຣະເຈົ້າຂອງທັງແຜ່ນດິນໂລກ, ໄດ້ຖືກປະຫານເພື່ອບາບຂອງໂລກ, **3 ນຟ** 11:14.

ເຮົາ, ພຣະເຈົ້າ, ໄດ້ທົນທຸກທໍລະມານກັບສິ່ງເຫລົ່ານີ້ແທນທຸກຄົນ, **ຄພ** 19:16. ເດັກນ້ອຍໆຖືກໄຖ່ຜ່ານພຣະອົງດຽວທີ່ຖືກກຳເນີດຂອງເຮົາ, **ຄພ** 29:46–47. ຈົ່ງເບິ່ງຄວາມທຸກທໍລະມານແລະ ຄວາມຕາຍຂອງຄົນທີ່ບໍ່ໄດ້ເຮັດບາບ, **ຄພ** 45:3–5.

ສິ່ງນີ້ເປັນລັກສະນະດຽວກັນກັບການເສຍສະລະຂອງພຣະອົງດຽວທີ່ຖືກກຳເນີດ, **ມຊ** 5:7. ໂດຍທາງການຊົດໃຊ້ຂອງພຣະຄຣິດ ມະນຸດຊາດທັງປວງຈະລອດ, **ຫຼຊ** 1:3.

**ຊົ່ວຮ້າຍ, ຄວາມຊົ່ວຮ້າຍ.** *ເບິ່ງ* ຄົນອະທຳ; ຄວາມມືດທາງວິນຍານ; ສົກກະປົກ, ຄວາມສົກກະປົກ; ບາບ; ບໍ່ຊອບທຳ, ຄວາມບໍ່ຊອບທຳ *ນຳອີກ*

ຄວາມຊົ່ວ, ຄວາມຊົ່ວຮ້າຍ; ການບໍ່ເຊື່ອຟັງຕໍ່ພຣະບັນຍັດຂອງພຣະເຈົ້າ.

ແລ້ວຂ້ອຍຈະເຮັດຄວາມຊົ່ວຮ້າຍແຮງນີ້, ແລະ ເຮັດຜິດບາບຕໍ່ສູ້ພຣະເຈົ້າໄດ້ຢ່າງໃດ, **ປຖກ** 39:7–9. ພຣະຜູ້ເປັນເຈົ້າບໍ່ສົນໃຈນຳຄົນຊົ່ວ: ແຕ່ພຣະອົງຮັບຟັງຄຳອະທິຖານຂອງຄົນຊອບທຳ, **ສພສ** 15:29. ເມື່ອຄົນອະທຳຄອງອຳນາດ, ປະຊາຊົນກໍເປັນທຸກ, **ສພສ** 29:2 (ຄພ 98:9).

ຈົ່ງກຳຈັດຄົນຊົ່ວຊ້າໃຫ້ອອກໄປຈາກພວກເຈົ້າເສຍ, **1 ກຣທ** 5:13. ພວກເຮົາຕໍ່ສູ້ກັບວິນຍານທີ່ຊົ່ວຮ້າຍ ໃນສະຖານທີ່ສູງ, **ອຟຊ** 6:12.

ຈົ່ງອອກມາຈາກຄົນຊົ່ວເຖີດ, ແລະ ຈົ່ງຢ່າແຕະຕ້ອງສິ່ງທີ່ບໍ່ສະອາດຂອງພວກເຂົາ, **ແອວ** 5:56–57 (ຄພ 38:42). ນີ້ຄືພາວະສຸດທ້າຍຂອງຄົນຊົ່ວ, **ແອວ** 34:35 (ແອວ 40:13–14). ຄວາມຊົ່ວຮ້າຍບໍ່ເຄີຍເປັນຄວາມສຸກເລີຍ, **ແອວ** 41:10. ມັນແມ່ນຄົນຊົ່ວທີ່ຖືກຄົນຊົ່ວລົງໂທດ, **ມມ** 4:5 (ຄພ 63:33).

ເມື່ອຊົ່ວໂມງນັ້ນມາເຖິງ ຈະເກີດການແຍກຄົນຊອບທຳ ແລະ ຄົນຊົ່ວອອກຈາກກັນ, **ຄພ** 63:54.

ທີ່ສຸດຂອງຄົນຊົ່ວຈະມາເຖິງດັ່ງນັ້ນ, **ຈສ—ມ** 1:55.

**ໂຊໂດມ.** *ເບິ່ງ* ໂກໂມຣາ *ນຳອີກ*

ໃນພຣະຄຳພີເດີມ, ເມືອງຊົ່ວຮ້າຍທີ່ພຣະຜູ້ເປັນເຈົ້າໄດ້ທຳລາຍ (ປຖກ 19:12–29).

**ໂຊນ, ກະສັດຂອງອິດສະຣາເອນ**

ໃນພຣະຄຳພີເດີມ, ກະສັດອົງທຳອິດຂອງອິດສະຣາເອນ ກ່ອນມັນຖືກແບ່ງແຍກ. ເຖິງແມ່ນວ່າ ເພິ່ນເປັນຄົນຊອບທຳ ໃນຕອນຕົ້ນຂອງການຂຶ້ນປົກຄອງຂອງເພິ່ນ, ແຕ່ພາຍລຸນມາ ເພິ່ນໄດ້ເຕັມໄປດ້ວຍຄວາມຍິ່ງຈອງຫອງ ແລະ ບໍ່ເຊື່ອຟັງຕໍ່ພຣະເຈົ້າ (1 ຊມອ 9–31).

**ໂຊໂລໂມນ.** *ເບິ່ງ* ດາວິດ; ບັດເຊບາ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງດາວິດກັບນາງບັດຊີບາ (2 ຊມອ 12:24). ໂຊໂລໂມນໄດ້ເປັນກະສັດຂອງອິດສະຣາເອນຊົ່ວໄລຍະໜຶ່ງ.

ດາວິດໄດ້ແຕ່ງຕັ້ງໂຊໂລໂມນໃຫ້ເປັນກະສັດ, **1 ກສ** 1:11–53. ດາວິດໄດ້ສັ່ງໂຊໂລໂມນໃຫ້ເດີນໃນທາງຂອງພຣະຜູ້ເປັນເຈົ້າ, **1 ກສ** 2:1–9. ພຣະຜູ້ເປັນເຈົ້າໄດ້ສັນຍາວ່າຈະປະທານສະຕິປັນຍາ ແລະ ຄວາມເຂົ້າໃຈໃຫ້ເພິ່ນ, **1 ກສ** 3:5–15. ໄດ້ຕັດສິນລະຫວ່າງແມ່ສອງຄົນ ແລະ ໄດ້ຮູ້ວ່າ ຄົນໃດເປັນແມ່ທີ່ແທ້ຈິງຂອງເດັກນ້ອຍ, **1 ກສ** 3:16–28. ໄດ້ແຕ່ງສຸພາສິດ ແລະ ໄດ້ແຕ່ງເພງ, **1 ກສ** 4:32. ໄດ້ສ້າງພຣະວິຫານ, **1 ກສ** 6; 7:13–51. ໄດ້ອຸທິດພຣະວິຫານ, **1 ກສ** 8. ລາຊີນີແຫ່ງເຊບາໄດ້ມາຢ້ຽມຢາມ, **1 ກສ** 10:1–13. ໂຊໂລໂມນໄດ້ແຕ່ງງານກັບຄົນຕ່າງຊາດຊາວອິດສະຣາເອນ, ແລະ ພວກເມຍຂອງເພິ່ນໄດ້ພາເພິ່ນໄປນະມັດສະການພຣະປອມ, **1 ກສ** 11:1–8.

ພຣະ ຜູ້ ເປັນ ເຈົ້າ ໄດ້ ພຣະ ພິ ໂລດ ໃຫ້ ໂຊ ໂລ ໂມນ, **1 ກສ** 11:9–13. ໄດ້ ເສຍ ຊີວິດ, **1 ກສ** 11:43. ດາວິດໄດ້ທຳນາຍເຖິງຄວາມຮຸ່ງເຮືອງ ຂອງການປົກຄອງຂອງໂຊໂລໂມນ, **ພສສ** 72.

ໂຊ ໂລ ໂມນກໍໄດ້ມີ ເມຍ ແລະ ສາວ ໃຊ້ ຫລາຍຄົນ, ແລະ ບາງຄົນບໍ່ໄດ້ຖືກຮັບຮູ້ຈາກ ພຣະຜູ້ເປັນເຈົ້າ, **ຄພ** 132:38 (ຢຄ 2:24).

**ໂຊໂລແຫ່ງຕາໂຊ.** *ເບິ່ງ* ໂປໂລ

**ໂຊຣຳ, ຊາວໂຊຣຳ**

ໃນພຣະຄຳພີມໍມອນ, ຄົນໃຊ້ຂອງລາບານ ຜູ້ໄດ້ເດີນທາງໄປກັບນີໄຟ ແລະ ລີໄຮ ໄປຫາ ແຜ່ນດິນ ແຫ່ງຄຳສັນຍາ (1 ນຟ 4:31–38). ເພາະ ຄວາມ ຊື່ ສັດ ຂອງ ໂຊຣຳ, ລີໄຮຈຶ່ງ ໄດ້ ອວຍພອນລາວ ພ້ອມດ້ວຍພວກລູກຊາຍຂອງ ລີໄຮ (2 ນຟ 1:30–32). ລູກຫລານຂອງລາວ ໄດ້ເປັນທີ່ຮູ້ຈັກກັນວ່າ ຊາວໂຊຣຳ (ຢຄ 1:13).

**ຊອບທຳ, ຄວາມຊອບທຳ.** *ເບິ່ງ* ຄ່າຄວນ, ການ ມີຄ່າຄວນ; ຊື່ສັດ, ຄວາມຊື່ສັດ; ເດີນ, ເດີນ ໄປກັບພຣະເຈົ້າ; ບໍ່ຊອບທຳ, ຄວາມບໍ່ຊອບ ທຳ; ພຣະບັນຍັດຂອງພຣະເຈົ້າ *ນຳອີກ*

ການເປັນຄົນທ່ຽງທຳ, ບໍລິສຸດ, ມີຄຸນນະທຳ, ແລະ ຊື່ຕົງ; ກະທຳໃນຄວາມເຊື່ອຟັງຕໍ່ພຣະ ບັນຍັດຂອງພຣະເຈົ້າ; ຫລີກລ້ຽງຈາກບາບ.

ພຣະຜູ້ເປັນເຈົ້າຈະອວຍພອນຜູ້ທີ່ເຊື່ອຟັງ, **ພສສ** 5:12. ພຣະຜູ້ເປັນເຈົ້າເຝົ້າເບິ່ງຄົນຊອບ ທຳ, **ພສສ** 34:15, 17 (1 ປຕ 3:12). ເມື່ອຄົນ ຊອບທຳຄອງອຳນາດ, ປະຊາຊົນກໍເປັນສຸກ, **ສພສ** 29:2 (ຄພ 98:9–10).

ຜູ້ໃດອຶດຫິວຄວາມຊອບທຳກໍເປັນສຸກ, **ມທ** 5:6 (3 ນຟ 12:6). ເຈົ້າທັງຫລາຍຈົ່ງສະແຫວງ ຫາອານາຈັກຂອງພຣະເຈົ້າກ່ອນ ແລະ ຄວາມ ຊອບທຳຂອງພຣະອົງ, **ມທ** 6:33. ຄົນຊອບທຳ ຈະເຂົ້າສູ່ຊີວິດນິລັນດອນ, **ມທ** 25:46. ຄຳອະ ທິຖານຂອງຜູ້ຊອບທຳມີລິດສັກສິດ ເຮັດໃຫ້ ເກີດຜົນ, **ຢກບ** 5:16.

ຄົນທີ່ຊອບທຳຍ່ອມເປັນທີ່ໂປດປານຂອງ ພຣະເຈົ້າ, **1 ນຟ** 17:35. ພຣະອົງຈະຮັກສາຄົນ ຊອບທຳ; ພວກເຂົາບໍ່ຕ້ອງຢ້ານ, **1 ນຟ** 22:17, 22. ຊາຕານຈະບໍ່ມີອຳນາດ ເພາະຄວາມຊອບ ທຳຂອງຜູ້ຄົນ ຂອງພຣະຜູ້ເປັນເຈົ້າ, **1 ນຟ** 22:26. ຖ້າ ຫາກ ບໍ່ ມີຄວາມ ຊອບທຳກໍບໍ່ມີ ຄວາມສຸກ, **2 ນຟ** 2:13. ຄົນຊອບທຳຈະໄດ້ ຮັບອານາຈັກຂອງພຣະເຈົ້າມາເປັນມູນມໍລະ ດົກ, **2 ນຟ** 9:18. ຄົນຊອບທຳບໍ່ຢ້ານຖ້ອຍຄຳ ແຫ່ງຄວາມຈິງ, **2 ນຟ** 9:40. ມະນຸດທຸກຄົນ ຈະຕ້ອງປ່ຽນແປງສູ່ສະພາບແຫ່ງຄວາມຊອບ ທຳ, **ມຊຢ** 27:25–26. ຊື່ຂອງຄົນຊອບທຳຈະ ຖືກຂຽນໄວ້ໃນໜັງສືທະບຽນແຫ່ງຊີວິດ, **ແອວ** 5:58. ພວກທ່ານສະແຫວງຫາຄວາມສຸກໂດຍ ການສ້າງຄວາມຊົ່ວຮ້າຍ, ຊຶ່ງສິ່ງເຫລົ່ານີ້ກົງ ກັນຂ້າມກັບທຳມະຊາດຂອງຄວາມຊອບທຳ, **ຮລມ** 13:38.

ເພງຂອງຄົນຊອບທຳເປັນຄຳອະທິຖານຫາ ເຮົາ, **ຄພ** 25:12. ຈົ່ງຢືນເຖີດ, ໂດຍມີແຜ່ນປົກ ເອິກແຫ່ງຄວາມຊອບທຳ, **ຄພ** 27:16 (ອຟຊ 6:14). ຄວາມ ຕາຍຂອງຄົນຊອບທຳ ຈະ ຫວານຊື່ນສຳລັບເຂົາ, **ຄພ** 42:46. ຄົນຊອບ ທຳຈະຖືກເຕົ້າໂຮມເຂົ້າກັນຈາກບັນດາປະຊາ ຊາດທັງປວງ, **ຄພ** 45:71. ມະນຸດຈະເຮັດໃຫ້ ເກີດຄວາມຊອບທຳຢ່າງຫລວງຫລາຍ ດ້ວຍ ຄວາມສະໝັກໃຈຂອງຕົນເອງ, **ຄພ** 58:27. ຄົນທີ່ເຮັດວຽກງານແຫ່ງຄວາມຊອບທຳຈະໄດ້ ຮັບສັນຕິສຸກໃນໂລກນີ້ ແລະ ຊີວິດນິລັນດອນ ໃນໂລກທີ່ຈະມາເຖິງ, **ຄພ** 59:23. ໃນການສະ ເດັດມາຄັ້ງທີສອງ, ຈະເກີດການແຍກຄົນຊອບ ທຳ ແລະ ຄົນຊົ່ວອອກຈາກກັນ, **ຄພ** 63:54. ອຳນາດແຫ່ງສະຫວັນຈະຖືກບັງຄັບບໍ່ໄດ້ ຫລື ຖືກຄວບຄຸມບໍ່ໄດ້ ນອກຈາກຕາມຫລັກທຳ ແຫ່ງຄວາມຊອບທຳເທົ່ານັ້ນ, **ຄພ** 121:36. ໃນບັນດາຄົນຊອບທຳມີແຕ່ສັນຕິສຸກ, **ຄພ** 138:22.

ຜູ້ຄົນຂອງຊີໂອນໄດ້ດຳລົງຢູ່ໃນຄວາມຊອບ ທຳ, **ມຊ** 7:18. ອັບຣາຮາມເປັນຜູ້ຕິດຕາມ ຄວາມຊອບທຳ, **ອຣຮ** 1:2.

**ເຊື່ອ, ຄວາມເຊື່ອ.** *ເບິ່ງ* ສັດທາ; ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື; ພຣະເຢຊູຄຣິດ; ໄວ້ວາງ ໃຈ, ຄວາມໄວ້ວາງໃຈ *ນຳອີກ*

ການມີສັດທາໃນບາງຄົນ ຫລື ຍອມຮັບວ່າ

ບາງສິ່ງເປັນຄວາມຈິງ. ບຸກຄົນຈະຕ້ອງກັບໃຈ ແລະ ເຊື່ອໃນພຣະເຢຊູຄຣິດ ກ່ອນຈະໄດ້ຮັບການຊ່ວຍໃຫ້ລອດໃນອານາຈັກຂອງພຣະເຈົ້າໄດ້ (ຄພ 20:29).

ຈົ່ງເຊື່ອໃຈພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກທ່ານ; ຈົ່ງເຊື່ອໃນສາດສະດາຂອງພຣະອົງ, **2 ຂຄ** 20:20. ດານີເອນບໍ່ໄດ້ຖືກທຳຮ້າຍຢູ່ໃນຖ້ຳສິງ ເພາະວ່າລາວເຊື່ອໃນພຣະເຈົ້າ, **ດນອ** 6:23.

ເຈົ້າເຊື່ອຢ່າງໃດກໍຈະເປັນຢ່າງນັ້ນສຳລັບເຈົ້າ, **ມທ** 8:13. ຖ້າພວກເຈົ້າມີຄວາມເຊື່ອພວກເຈົ້າກໍຈະໄດ້ຮັບຕາມທີ່ອະທິຖານ, **ມທ** 21:22. ຢ່າວິຕົກເລີຍ ຈົ່ງເຊື່ອເທົ່ານັ້ນ, **ມຣກ** 5:36. ທຸກສິ່ງເປັນໄປໄດ້ສຳລັບຜູ້ທີ່ເຊື່ອ, **ມຣກ** 9:23–24. ຜູ້ທີ່ເຊື່ອ ແລະ ຮັບບັບຕິສະມາຈະລອດ, **ມຣກ** 16:16 (2 ນຟ 2:9; 3 ນຟ 11:33–35). ຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະມີຊີວິດອັນເປັນນິດ, **ຢຮ** 3:16, 18, 36 (ຢຮ 5:24; ຄພ 10:50). ພວກຂ້ານ້ອຍເຊື່ອ ແລະ ຮູ້ແລ້ວວ່າພຣະອົງເປັນພຣະຄຣິດ, **ຢຮ** 6:69. ຜູ້ທີ່ວາງໃຈເຊື່ອໃນເຮົາເຖິງແມ່ນວ່າຕາຍໄປແລ້ວກໍຍັງມີຊີວິດຢູ່, **ຢຮ** 11:25–26. ພວກເຮົາຜູ້ທີ່ເຊື່ອຈຶ່ງໄດ້ເຂົ້າໄປໃນທີ່ພັກ, **ຮຣ** 4:3. ເຊື່ອໃນພຣະເຢຊູຄຣິດ, ແລະ ຮັກຊຶ່ງກັນແລະກັນ, **1 ຢຮ** 3:23.

ພຣະເມຊີອາຈະບໍ່ທຳລາຍຜູ້ໃດທີ່ເຊື່ອຖືໃນພຣະອົງ, **2 ນຟ** 6:14. ຊາວຢິວຈະຖືກຂົ່ມເຫັງ ຈົນວ່າພວກເຂົາຈະຖືກຊັກຊວນໃຫ້ເຊື່ອໃນພຣະຄຣິດ, **2 ນຟ** 25:16. ຖ້າຫາກພວກທ່ານເຊື່ອສິ່ງທັງໝົດນີ້ ໃຫ້ເບິ່ງວ່າພວກທ່ານເຮັດຕາມນັ້ນ, **ມຊຢ** 4:10. ພຣະບຸດຈະຮັບເອົາການລ່ວງລະເມີດຂອງຄົນເຫລົ່ານັ້ນ ຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ, **ແອວ** 11:40. ຄົນທີ່ເຊື່ອຖືໃນພຣະຄຳຂອງພຣະເຈົ້າ ໂດຍບໍ່ດື້ດ້ານໃຈຍ່ອມເປັນສຸກ, **ແອວ** 32:16. ຖ້າຫາກພວກທ່ານເຮັດບໍ່ໄດ້ຫລາຍໄປກວ່າຄວາມປາດຖະໜາທີ່ຈະເຊື່ອ, ກໍຂໍໃຫ້ຄວາມປາດຖະໜານີ້ເກີດຜົນໃນພວກທ່ານ, **ແອວ** 32:27. ຖ້າຫາກພວກທ່ານເຊື່ອໃນພຣະນາມຂອງພຣະອົງແລ້ວ, ພວກທ່ານຈະກັບໃຈ, **ຮລມ** 14:13. ຜູ້ໃດກໍຕາມທີ່ເຊື່ອໃນພຣະຄຣິດຍ່ອມເຊື່ອໃນພຣະບິດາຄືກັນ, **3 ນຟ** 11:35. ບໍ່ເຄີຍມີມະນຸດຄົນໃດທີ່ເຊື່ອໃນພຣະຜູ້ເປັນເຈົ້າຄືກັນກັບນ້ອງຊາຍຂອງຢາເຣັດເຊື່ອ, **ອທ** 3:15. ທຸກສິ່ງທຸກຢ່າງທີ່ເຊື້ອເຊີນໃຫ້ເຊື່ອໃນພຣະຄຣິດ ຖືກສົ່ງມາໂດຍອຳນາດຂອງພຣະຄຣິດ, **ມຣນ** 7:16–17.

ຜູ້ໃດກໍຕາມທີ່ເຊື່ອໃນພຣະຄຳຂອງພຣະຜູ້ເປັນເຈົ້າຖືກສະແດງໃຫ້ປະຈັກໂດຍພຣະວິນຍານ, **ຄພ** 5:16. ຜູ້ທີ່ເຊື່ອໃນພຣະນາມຂອງພຣະຜູ້ເປັນເຈົ້າ ຈະກາຍເປັນພຣະບຸດຂອງພຣະເຈົ້າ, **ຄພ** 11:30 (ຢຮ 1:12). ແກ່ບາງຄົນມັນຖືກມອບໃຫ້ເພື່ອຈະເຊື່ອຖ້ອຍຄຳຂອງຄົນອື່ນ, **ຄພ** 46:14. ເຄື່ອງໝາຍຈະຕິດຕາມຄົນທີ່ເຊື່ອ, **ຄພ** 58:64 (ຄພ 63:7–12).

ຜູ້ທີ່ເຊື່ອ, ກັບໃຈ, ແລະ ຮັບບັບຕິສະມາ ຈະໄດ້ຮັບພຣະວິນຍານບໍລິສຸດ, **ມຊ** 6:52.

**ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ.** *ເບິ່ງ* ກົດ; ຊື່ນຊົມ, ຄວາມຊື່ນຊົມ; ເດີນ, ເດີນໄປກັບພຣະເຈົ້າ; ພຣະບັນຍັດຂອງພຣະເຈົ້າ; ພອນ, ໃຫ້ພອນ, ເປັນພອນ; ຫູ, ພຣະກັນ *ບຳອີກ*

ທີ່ຈະໄດ້ຍິນ ແລະ ເຊື່ອຟັງສຸລະສຽງ ຫລື ຄຳສອນຂອງພຣະຜູ້ເປັນເຈົ້າ. ໃນຄວາມໝາຍທາງວິນຍານ, ການເຊື່ອຟັງຄືການເຮັດຕາມພຣະປະສົງຂອງພຣະເຈົ້າ.

ໂນອາໄດ້ເຮັດຕາມທີ່ພຣະເຈົ້າໄດ້ສັ່ງໄວ້ທຸກປະການ, **ປຖກ** 6:22. ອັບຣາຮາມໄດ້ເຊື່ອຟັງພຣະຜູ້ເປັນເຈົ້າ, **ປຖກ** 22:15–18. ພວກຂ້ານ້ອຍຈະເຮັດທຸກໆສິ່ງທີ່ພຣະອົງໄດ້ສັ່ງໄວ້, **ອພຍ** 24:7. ອິດສະຣາເອນເອີຍ, ຈົ່ງເຊື່ອຟັງ ແລະ ປະຕິບັດຕາມ, **ພບຍ** 6:1–3. ພຣະອົງຈະສົ່ງຜູ້ປະກາດພຣະຄຳຜູ້ໜຶ່ງດັ່ງໂມເຊ, ແລະ ຜູ້ຄົນຕ້ອງເຊື່ອຟັງເພິ່ນ, **ພບຍ** 18:15. ຈົ່ງຮັກພຣະຜູ້ເປັນເຈົ້າ ແລະ ຈົ່ງເຊື່ອຟັງພຣະອົງ, **ພບຍ** 30:20. ເຊື່ອຟັງກໍດີກວ່າຖວາຍແກະໂຕດີທີ່ສຸດເປັນເຄື່ອງບູຊາ, **1 ຊມອ** 15:20–23. ເຊື່ອຟັງພຣະອົງກໍດີກວ່າຖວາຍແກະໂຕດີທີ່ສຸດ, **1 ຊມອ** 15:22. ຈົ່ງຢຳເກງພຣະເຈົ້າ,

ແລະ ເຮັດຕາມຂໍ້ຄຳສັ່ງຂອງພຣະອົງ, **ປຍຈ** 12:13–14. ພວກຂ້າພຣະອົງບໍ່ໄດ້ຍອມຟັງຜູ້ປະກາດພຣະຄຳຄືຜູ້ຮັບໃຊ້ຂອງພຣະອົງ, **ດນອ** 9:6.

ບໍ່ແມ່ນວ່າທຸກຄົນທີ່ເອີ້ນເຮົາວ່າ ພຣະອົງເຈົ້າ ພຣະອົງເຈົ້າ ແລ້ວຈະເຂົ້າໄປໃນອານາຈັກຂອງພຣະບິດາໄດ້ ເຂົ້າໄດ້ແຕ່ຜູ້ທີ່ປະຕິບັດຕາມນ້ຳພຣະໄທຂອງພຣະບິດາ, **ມທ** 7:21 (3 ນຟ 14:21). ຜູ້ໃດທີ່ເຕັມໃຈປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ຜູ້ນັ້ນກໍຈະຮູ້ວ່າສິ່ງທີ່ເຮົາສັ່ງສອນນັ້ນມາຈາກພຣະເຈົ້າ, **ຢຮ** 7:17. ເຮົາຈຳຕ້ອງເຊື່ອຟັງພຣະເຈົ້າຫລາຍກວ່າມະນຸດ, **ກຈກ** 5:29. ຝ່າຍບຸດທັງຫລາຍ, ຈົ່ງນົບນ້ອມເຊື່ອຟັງບິດາມານດາຂອງຕົນ, **ອຟຊ** 6:1 (ກລຊ 3:20).

ເຮົາຈະໄປ ແລະ ເຮັດສິ່ງທີ່ພຣະຜູ້ເປັນເຈົ້າບັນຊາ, **1 ນຟ** 3:7. ຂ້າພະເຈົ້າໄດ້ເຊື່ອຟັງສຽງຮຽກຮ້ອງຂອງພຣະວິນຍານ, **1 ນຟ** 4:6–18. ຖ້າລູກຫລານມະນຸດຮັກສາພຣະບັນຍັດຂອງພຣະເຈົ້າ ແລ້ວພຣະອົງຍ່ອມບຳລຸງລ້ຽງດູພວກເຂົາ, **1 ນຟ** 17:3. ຄົນຊອບທຳທີ່ເຊື່ອຟັງຄຳເວົ້າຂອງສາດສະດາຈະບໍ່ຕາຍ, **2 ນຟ** 26:8. ຈົ່ງລະວັງ ຢ້ານວ່າພວກທ່ານຈະເລືອກເຊື່ອຟັງວິນຍານຊົ່ວ, **ມຊຢ** 2:32–33, 37 (ຄພ 29:45). ມະນຸດຈະໄດ້ຮັບລາງວັນຕາມວິນຍານທີ່ພວກເຂົາໄດ້ເລືອກເຊື່ອຟັງ, **ແອວ** 3:26–27. ຖ້າຫາກພວກທ່ານບໍ່ເຊື່ອຟັງສຽງຂອງຜູ້ລ້ຽງທີ່ດີ, ພວກທ່ານກໍບໍ່ແມ່ນແກະຂອງພຣະອົງ, **ແອວ** 5:38 (ຣລມ 7:18).

ຈົ່ງເຊື່ອຟັງ, ໂອ້ ເຈົ້າຜູ້ຄົນແຫ່ງສາດສະໜາຈັກຂອງເຮົາ, **ຄພ** 1:1. ມະນຸດຄວນເຮັດຫລາຍສິ່ງຫລາຍຢ່າງດ້ວຍຄວາມສະໝັກໃຈຂອງຕົນເອງ, **ຄພ** 58:26–29. ບໍ່ມີສິ່ງໃດທີ່ມະນຸດຈະເຮັດໃຫ້ພຣະເຈົ້າຂຸ່ນເຄືອງ, ຍົກເວັ້ນແຕ່ຜູ້ທີ່ບໍ່ສາລະພາບວ່າພຣະຫັດຂອງພຣະອົງຢູ່ໃນທຸກສິ່ງທັງປວງ ແລະ ບໍ່ເຊື່ອຟັງຕໍ່ພຣະບັນຍັດຂອງພຣະອົງ, **ຄພ** 59:21. ເຮົາ ພຣະຜູ້ເປັນເຈົ້າ ຈະເຮັດຕາມສັນຍາເມື່ອພວກເຈົ້າເຮັດຕາມສິ່ງທີ່ເຮົາກ່າວ, **ຄພ** 82:10. ຄົນທີ່ເຊື່ອຟັງສຸລະສຽງຂອງພຣະວິນຍານໄດ້ຮັບຄວາມສະຫວ່າງ ແລະ ມາຫາພຣະບິດາ, **ຄພ** 84:46–47. ທຸກຄົນທີ່ເຊື່ອຟັງສຽງຂອງເຮົາ ຈະເຫັນໜ້າເຮົາ ແລະ ຮູ້ວ່າເຮົາເປັນຢູ່, **ຄພ** 93:1. ພວກເຂົາຊັກຊ້າໃນການເຊື່ອຟັງພຣະຜູ້ເປັນເຈົ້າ; ສະນັ້ນ, ພຣະອົງຈຶ່ງຊັກຊ້າໃນການໄດ້ຍິນຄຳອະທິຖານຂອງພວກເຂົາ, **ຄພ** 101:7–9. ຜູ້ທີ່ບໍ່ເຊື່ອຟັງພຣະບັນຍັດຈະຖືກຕີສອນ, **ຄພ** 103:4 (ມຊ 4:4). ຜູ້ຄົນຕ້ອງຖືກຕີສອນຈົນກວ່າພວກເຂົາໄດ້ຮຽນຮູ້ການເຊື່ອຟັງ, **ຄພ** 105:6. ເມື່ອພວກເຮົາໄດ້ຮັບພອນປະການໃດຈາກພຣະເຈົ້າ, ຍ່ອມເປັນໄປເພາະການເຊື່ອຟັງຕໍ່ກົດນັ້ນຊຶ່ງມັນໄດ້ຖືກກຳນົດໄວ້ແລ້ວ, **ຄພ** 130:21.

ອາດາມໄດ້ເຊື່ອຟັງ, **ມຊ** 5:5. ພວກເຮົາຈະພິສູດພວກເຂົາ ເພື່ອເບິ່ງວ່າພວກເຂົາຈະເຮັດທຸກສິ່ງທັງປວງສິ່ງໃດກໍຕາມທີ່ພຣະຜູ້ເປັນເຈົ້າຈະບັນຊາພວກເຂົາຫລືບໍ່, **ອຣຣ** 3:25.

**ເຊື້ອສາຍຂອງອັບຣາຮາມ.** *ເບິ່ງ* ອັບຣາຮາມ—ເຊື້ອສາຍຂອງອັບຣາຮາມ

**ເຊື້ອສາຍອິດສະຣາເອນ.** *ເບິ່ງ* ອິດສະຣາເອນ

**ໄຊຣັດ**

ໃນພຣະຄຳພີເດີມ, ກະສັດຂອງເປີເຊຍ ຜູ້ໄດ້ເຮັດໃຫ້ການທຳນາຍຂອງເອຊາຢາເກີດເປັນຈິງ (2 ຂຄ 36:22–23; ອຊຢ 44:28; 45:1) ໂດຍການປ່ອຍໃຫ້ຊາວຢິວກັບຄືນສູ່ເຢຣູຊາເລັມ ເພື່ອໄປສ້ອມແປງພຣະວິຫານ, ດັ່ງນັ້ນ ຈຶ່ງໄດ້ເຮັດໃຫ້ການເປັນຊະເລີຍທີ່ບາບີໂລນບາງສ່ວນສິ້ນສຸດລົງ. ເອຊາຢາໄດ້ທຳນາຍໄວ້ປະມານ 180 ປີ ກ່ອນກະສັດໄດ້ກະທຳການນັ້ນ.

**ຊຳລະລ້າງ, ຖືກຊຳລະລ້າງ, ການຊຳລະລ້າງ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ບັບຕິສະມາ, ໃຫ້ບັບຕິສະມາ *ບຳອິກ*

ການເຮັດໃຫ້ສະອາດ, ທາງຮ່າງກາຍ ຫລືຈິດໃຈ. ຕາມສັນຍາລັກແລ້ວ, ບຸກຄົນທີ່ກັບໃຈຈະຖືກເຮັດໃຫ້ສະອາດຈາກຄວາມໝັກໝ່ອງຂອງບາບໃນຊີວິດ ແລະ ຜົນຂອງມັນຈາກການເສຍສະລະຊົດໃຊ້ຂອງພຣະເຢຊູຄຣິດ. ການຊຳລະລ້າງບາງຢ່າງທີ່ປະຕິບັດພາຍໃຕ້

ສິດອຳນາດຂອງຖານະປະໂລຫິດທີ່ຖືກຕ້ອງ ເປັນພິທີການທີ່ສັກສິດ.

ພວກປະໂລຫິດຈະຕ້ອງຊັກເຄື່ອງນຸ່ງຫົ່ມ ອາບນ້ຳຊຳລະຮ່າງກາຍ, **ຈບຊ** 19:7. ໂຜດຊຳລະລ້າງຄວາມຊົ່ວຂອງຂ້ານ້ອຍໃຫ້ສິ້ນໄປ, **ພສສ** 51:2, 7. ຈົ່ງຊຳລະຕົວຂອງພວກເຈົ້າໃຫ້ສະອາດ, ຈົ່ງເລີກຈາກການຊົ່ວຊ້າ, **ອຊຢ** 1:16–18.

ພຣະເຢຊູໄດ້ລ້າງຕີນໃຫ້ອັກຄະສາວົກຂອງພຣະອົງ, **ຢຮ** 13:4–15 (ຄພ 88:138–139). ຈົ່ງຮັບບັບຕິສະມາ, ແລະ ຊຳລະບາບກຳຂອງເຈົ້າ, **ກຈກ** 22:16 (ແອວ 7:14; ຄພ 39:10).

ບໍ່ມີມະນຸດຄົນໃດທີ່ຈະລອດໄດ້ ຖ້າບໍ່ຊຳລະອາພອນຂອງເຂົາໃຫ້ຂາວສະອາດເສຍກ່ອນ, **ແອວ** 5:21 (3 ນຟ 27:19). ອາພອນຂອງເຂົາເຈົ້າຖືກລ້າງໃຫ້ຂາວສະອາດແລ້ວໂດຍໂລຫິດຂອງພຣະຄຣິດ, **ແອວ** 13:11 (ອທ 13:10).

ໂດຍການຮັກສາພຣະບັນຍັດ ພວກເຂົາອາດຈະໄດ້ຮັບການລ້າງ ແລະ ຊຳລະຈາກບາບທັງໝົດຂອງພວກເຂົາ, **ຄພ** 76:52. ການເຈີມ ແລະ ການຊຳລະລ້າງຂອງພວກເຈົ້າ ໄດ້ຖືກແຕ່ງຕັ້ງໂດຍພິທີການໃນບ້ານອັນສັກສິດຂອງເຮົາ, **ຄພ** 124:39–41.

**ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ຮັບຮອງ, ການຮັບຮອງ *ບຳອີກ*

ຂັ້ນຕອນຂອງການກາຍເປັນອິດສະລະຈາກບາບ, ບໍລິສຸດ, ສະອາດ, ແລະ ສັກສິດ ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດ (ມຊ 6:59–60).

ພຣະເຈົ້າໄດ້ເລືອກພວກເຈົ້າໄວ້ ເພື່ອໂຜດໃຫ້ພົ້ນ ຜ່ານການຊຳລະໃຫ້ບໍລິສຸດຈາກພຣະວິນຍານ, **2 ທສນ** 2:13. ພວກເຮົາໄດ້ຮັບການຊຳລະໃຫ້ບໍລິສຸດ ດ້ວຍການຖວາຍພຣະກາຍຂອງພຣະເຢຊູ, **ຮຣ** 10:10. ພຣະເຢຊູໄດ້ຮັບທຸກທໍລະມານ ເພື່ອວ່າພຣະອົງຈະໄດ້ຊຳລະຜູ້ຄົນດ້ວຍໂລຫິດຂອງພຣະອົງເອງ, **ຮຣ** 13:12.

ມະຫາປະໂລຫິດໄດ້ຮັບການຊຳລະໃຫ້ບໍລິສຸດ ແລະ ອາພອນຂອງເຂົາເຈົ້າຖືກລ້າງໃຫ້ຂາວສະອາດແລ້ວໂດຍໂລຫິດຂອງພຣະເມສານ້ອຍ, **ແອວ** 13:10–12. ການຊຳລະໃຫ້ບໍລິສຸດໄດ້ມາເຖິງຄົນທີ່ຍອມຖວາຍໃຈຂອງພວກເຂົາແດ່ພຣະເຈົ້າ, **ຮລມ** 3:33–35. ຈົ່ງກັບໃຈ ເພື່ອເຈົ້າຈະໄດ້ຮັບການຊຳລະໃຫ້ບໍລິສຸດໂດຍການຮັບພຣະວິນຍານບໍລິສຸດ, **3 ນຟ** 27:20.

ການຊຳລະໃຫ້ບໍລິສຸດ ຜ່ານພຣະຄຸນຂອງພຣະເຢຊູຄຣິດ ແມ່ນຖືກຕ້ອງ ແລະ ຈິງ, **ຄພ** 20:31. ພຣະເຢຊູໄດ້ມາເພື່ອເຮັດໃຫ້ໂລກບໍລິສຸດ, **ຄພ** 76:41. ຈົ່ງຊຳລະຕົນເອງໃຫ້ບໍລິສຸດ ເພື່ອໃຫ້ຈິດໃຈຂອງພວກເຈົ້າເຫັນແກ່ພຣະເຈົ້າແຕ່ຢ່າງດຽວ, **ຄພ** 88:68.

**ຍາກຈົນ.** *ເບິ່ງ* ເຄື່ອງຖວາຍ; ຄວາມຜາສຸກ; ຖືສິນອົດເຂົ້າ, ການຖືສິນອົດເຂົ້າ; ຖ່ອມຕົນ, ຄວາມຖ່ອມຕົນ; ໃຫ້ທານ, ການໃຫ້ທານ *ບຳອີກ*

ໃນພຣະຄຳພີ, ຄົນຍາກຈົນ ສາມາດໝາຍເຖິງ (1) ຄົນທີ່ຂາດແຄນສິ່ງຂອງ, ດັ່ງເຊັ່ນ ອາຫານ, ເຄື່ອງນຸ່ງຫົ່ມ, ແລະ ທີ່ພັກພາອາໄສ, ຫລື (2) ຜູ້ທີ່ຖ່ອມຕົວ ແລະ ບໍ່ຈອງຫອງ.

*ຍາກຈົນໃນສິ່ງຂອງ:* ຢ່າໄດ້ເປັນຄົນໃຈຄັບແຄບຕໍ່ຄົນທີ່ມີຄວາມຂັດສົນ, **ພບຍ** 15:7. ຄົນຊົ່ວຂົ່ມເຫັງຄົນຍາກຈົນຢ່າງຈອງຫອງ, **ພສສ** 10:2. ຜູ້ທີ່ໃຫ້ທານແກ່ຄົນທຸກ ຈະບໍ່ຂັດສົນເລີຍ, **ສພສ** 28:27. ຈົ່ງໃຫ້ທີ່ພັກແກ່ຜູ້ທີ່ຍາກຈົນ, **ອຊຢ** 58:6–7.

ຖ້າເຈົ້າຢາກເປັນຜູ້ດີຄົບຖ້ວນ, ຈົ່ງແຈກທານໃຫ້ແກ່ຄົນຍາກຈົນ, **ມທ** 19:21 (ມຣກ 10:21; ລກ 18:22). ພຣະເຈົ້າໄດ້ເລືອກເອົາຄົນທຸກຈົນໃນໂລກນີ້, **ຢກບ** 2:5.

ເພາະວ່າເຂົາຮັ່ງມີ ເຂົາຈຶ່ງດູຖູກຄົນທຸກຍາກ, **2 ນຟ** 9:30. ເພື່ອໃຫ້ມີການປົດບາບຂອງພວກທ່ານ, ຈົ່ງແບ່ງປັນເຂົ້າຂອງ ຂອງພວກທ່ານໃຫ້ແກ່ຄົນຍາກຈົນ, **ມຊຢ** 4:26. ພວກເຂົາໄດ້ແບ່ງປັນເຂົ້າຂອງ ຂອງພວກເຂົາໃຫ້ແກ່ຄົນຍາກຈົນ, **ແອວ** 1:27. ຖ້າຫາກພວກທ່ານຫັນໜ້າໜີຈາກຄົນຂັດສົນ, ການອະທິຖານຂອງພວກທ່ານກໍບໍ່ມີປະໂຫຍດ, **ແອວ** 34:28. ຊາວນີໄຟ

ມີເຂົ້າຂອງທັງໝົດນຳກັນເປັນສ່ວນລວມ; ບໍ່ມີຜູ້ໃດຮັ່ງມີ ແລະ ຍາກຈົນ, **4 ນຟ** 1:3.

ຈົ່ງນຶກເຖິງຄົນຍາກຈົນ, **ຄພ** 42:30 (ຄພ 52:40). ວິບັດແກ່ຄົນຍາກຈົນ ຜູ້ທີ່ຫົວໃຈບໍ່ຊອກຊ້ຳ, **ຄພ** 56:17–18. ຄົນຍາກຈົນຈະເຂົ້າມາໃນງານສົມຣົດຂອງພຣະເມສານ້ອຍ, **ຄພ** 58:6–11. ອະທິການຕ້ອງຊອກຫາຄົນຍາກຈົນ, **ຄພ** 84:112. ກົດຂອງພຣະກິດຕິຄຸນຊີ້ນຳເລື່ອງການດູແລຄົນຍາກຈົນ, **ຄພ** 104:17–18.

ບໍ່ມີຄົນຍາກຈົນໃນບັນດາພວກເຂົາ, **ມຊ** 7:18.

*ຄົນທີ່ຍາກຈົນທາງວິນຍານ:* ຜູ້ນັ້ນຈະໄດ້ຮັບພອນຫລາຍກວ່າຜູ້ທີ່ຖືກບັງຄັບໃຫ້ຖ່ອມຕົວເພາະຄວາມຍາກຈົນ, **ແອວ** 32:4–6, 12–16. ຄົນທີ່ຍາກຈົນທາງວິນຍານທີ່ມາຫາເຮົາຍ່ອມເປັນສຸກ, **3 ນຟ** 12:3 (ມທ 5:3).

ຄົນຍາກຈົນ ແລະ ຄົນອ່ອນໂຍນ ຈະມີພຣະກິດຕິຄຸນສັ່ງສອນໃຫ້ແກ່ພວກເຂົາ, **ຄພ** 35:15.

**ຍາກລຳບາກ, ຄວາມຍາກລຳບາກ.** *ເບິ່ງ* ຂົ່ມເຫັງ, ການຂົ່ມເຫັງ; ຕີສອນ, ການຕີສອນ; ລໍ້ລວງ, ການລໍ້ລວງ; ອົດທົນ, ຄວາມອົດທົນ *ນຳອີກ*

ຜ່ານຄວາມຍາກລຳບາກ—ການທົດລອງ, ບັນຫາ, ແລະ ຄວາມໂສກເສົ້າ—ມະນຸດສາມາດມີປະສົບການຫລາຍຢ່າງ ທີ່ນຳໄປສູ່ຄວາມເຕີບໂຕທາງວິນຍານ ແລະ ຄວາມກ້າວໜ້ານິລັນດອນ ໂດຍການຫັນໄປຫາພຣະຜູ້ເປັນເຈົ້າ.

ພຣະເຈົ້າພຣະອົງເອງໄດ້ຊ່ວຍກູ້ເອົາພວກເຈົ້າໃຫ້ພົ້ນຈາກຄວາມຍາກລຳບາກຕະຫລອດທັງຄວາມຫຍຸ້ງຍາກທຸກຢ່າງດ້ວຍ, **1 ຊມອ** 10:19. ເມື່ອເດືອດຮ້ອນຈຶ່ງຮ້ອງຫາອົງພຣະຜູ້ເປັນເຈົ້າໃຫ້ຊ່ວຍຊູ, **ພສສ** 107:6, 13, 19, 28. ພຣະຜູ້ເປັນເຈົ້າຈະເຮັດໃຫ້ພວກເຈົ້າຜ່ານພົ້ນຄວາມຍາກລຳບາກໄປໄດ້, ແຕ່ພຣະອົງເອງຈະຢູ່ໃນທີ່ນັ້ນເພື່ອສິດສອນພວກເຈົ້າ, **ອຊຢ** 30:20–21.

ມັນຈຳເປັນວ່າ ຕ້ອງມີການກົງກັນຂ້າມໃນທຸກຢ່າງ, **2 ນຟ** 2:11.

ຖ້າຫາກພວກເຂົາບໍ່ເຄີຍມີຄວາມຂົມ ພວກເຂົາຈະຮູ້ຄວາມຫວານບໍ່ໄດ້, **ຄພ** 29:39. ຄວາມຍາກລຳບາກຂອງເຈົ້າ ຈະເປັນຢູ່ພຽງຊົ່ວຄາວ, **ຄພ** 121:7–8. ສິ່ງທັງໝົດເຫລົ່ານີ້ຈະເປັນປະສົບການໃຫ້ແກ່ເຈົ້າ, ແລະ ຈະເກີດຂຶ້ນເພື່ອຄວາມດີຂອງເຈົ້າ, **ຄພ** 122:5–8.

ພວກເຂົາຈະໄດ້ຊີມລົດຊາດອັນຂົມຂື່ນ, ເພື່ອວ່າພວກເຂົາຈະຮູ້ຈັກໃຫ້ຄຸນຄ່າແກ່ຄວາມດີ, **ມຊ** 6:55.

**ຍາມ, ຄົນຍາມ.** *ເບິ່ງ* ເຕືອນ, ຄຳເຕືອນ *ນຳອີກ*

ການລະມັດລະວັງ, ການເຝົ້າຍາມ. ບຸກຄົນທີ່ຄອຍເຝົ້າ ແລະ ເຊື່ອຟັງ ແມ່ນພ້ອມ ແລະ ໄດ້ຕຽມຕົວແລ້ວ. ຄົນຍາມເປັນຜູ້ນຳ ຜູ້ໄດ້ຖືກເອີ້ນໂດຍຕົວແທນຂອງພຣະຜູ້ເປັນເຈົ້າ ໃຫ້ຮັບໜ້າທີ່ຮັບຜິດຊອບໃດໜຶ່ງໂດຍສະເພາະສຳລັບຄວາມຜາສຸກຂອງຄົນອື່ນ. ບຸກຄົນທີ່ໄດ້ຖືກເອີ້ນໃຫ້ເປັນຜູ້ນຳ ກໍມີໜ້າທີ່ຮັບຜິດຊອບພິເສດໃຫ້ເປັນຄົນຍາມຕະຫລອດທົ່ວໂລກນຳອີກ.

ເຮົາໄດ້ຕັ້ງເຈົ້າໃຫ້ເປັນຄົນຍາມ,**ອຊກ** 3:17–21. ຄົນຍາມທີ່ເປົ່າສຽງຕັກເຕືອນຄົນອື່ນ ຈະລອດຊີວິດ, **ອຊກ** 33:7–9.

ຈົ່ງເຝົ້າລະວັງຢູ່: ເພາະພວກເຈົ້າບໍ່ຮູ້ວ່າພຣະຜູ້ເປັນເຈົ້າຈະມາເວລາໃດ, **ມທ** 24:42–43 (ມທ 25:13; ມຣກ 13:35–37; ຄພ 133:10–11). ຈົ່ງເຝົ້າລະວັງ ແລະ ອະທິຖານຢູ່ເພື່ອພວກເຈົ້າຈະບໍ່ໄດ້ເຂົ້າໄປສູ່ການລໍ້ລວງ, **ມທ** 26:41 (3 ນຟ 18:15, 18).

ຖ້າຫາກພວກທ່ານບໍ່ລະວັງຕົວ, ຄວາມນຶກຄິດຂອງພວກທ່ານ, ຄຳເວົ້າຂອງພວກທ່ານ, ການກະທຳຂອງພວກທ່ານ, ພວກທ່ານຈະຕ້ອງຕາຍ, **ມຊຢ** 4:30. ແອວມາໄດ້ແຕ່ງຕັ້ງປະໂລຫິດ ແລະ ແອວເດີ ໃຫ້ເປັນປະທານ ແລະ ເບິ່ງແຍງສາດສະໜາຈັກ, **ແອວ** 6:1.

ຄົນທີ່ບໍ່ຫລຽວຫາພຣະຜູ້ຊ່ວຍໃຫ້ລອດ ຈະຖືກຕັດອອກ, **ຄພ** 45:44. ອະທິການ ແລະ ຄົນອື່ນໆ ໄດ້ຖືກເອີ້ນ ແລະ ແຕ່ງຕັ້ງຈາກພຣະເຈົ້າເພື່ອດູແລສາດສະໜາຈັກ, **ຄພ** 46:27. ພຣະ

ຜູ້ເປັນເຈົ້າໄດ້ຈັດໃຫ້ມີຄົນຍາມຮັກສາສວນອະງຸ່ນ, **ຄພ** 101:44–58.

**ຍຸກສະໄໝ.** *ເບິ່ງ* ການຟື້ນຟູພຣະກິດຕິຄຸນ; ຂໍກະແຈຂອງຖານະປະໂລຫິດ; ຖານະປະໂລຫິດ; ພຣະກິດຕິຄຸນ *ນຳອີກ*

ຍຸກສະໄໝພຣະກິດຕິຄຸນເປັນຊ່ວງເວລາຊຶ່ງພຣະຜູ້ເປັນເຈົ້າມີຜູ້ຮັບໃຊ້ທີ່ມີສິດອຳນາດຢ່າງໜ້ອຍໜຶ່ງຄົນຢູ່ໃນໂລກນີ້ ຜູ້ມີຂໍກະແຈຂອງຖານະປະໂລຫິດທີ່ສັກສິດ.

ອາດາມ, ເອນົກ, ໂນອາ, ອັບຣາຮາມ, ໂມເຊ, ພຣະເຢຊູຄຣິດ, ໂຈເຊັບ ສະມິດ, ແລະຄົນອື່ນໆ ຕ່າງກໍໄດ້ເລີ່ມຕົ້ນຍຸກສະໄໝໃໝ່ແຫ່ງພຣະກິດຕິຄຸນ. ເມື່ອພຣະຜູ້ເປັນເຈົ້າຈັດຕັ້ງຍຸກສະໄໝ, ພຣະກິດຕິຄຸນໄດ້ຖືກເປີດເຜີຍໃໝ່ ເພື່ອວ່າຜູ້ຄົນຂອງຍຸກສະໄໝນັ້ນບໍ່ຈຳເປັນຕ້ອງເພິ່ງພາອາໄສຍຸກສະໄໝທີ່ຜ່ານມາແລ້ວ ສຳລັບຄວາມຮູ້ເລື່ອງແຜນແຫ່ງຄວາມລອດ. ຍຸກສະໄໝທີ່ເລີ່ມຕົ້ນດ້ວຍໂຈເຊັບສະມິດ ຮູ້ຈັກກັນວ່າ "ຍຸກສະໄໝຂອງຄວາມສົມບູນແຫ່ງເວລາ."

ພຣະເຈົ້າແຫ່ງຟ້າສະຫວັນຈະຕັ້ງອານາຈັກໜຶ່ງຂຶ້ນ, **ດນອ** 2:44 (ຄພ 65).

ໃນຍຸກສຸດທ້າຍນັ້ນ ເຮົາຈະຖອກເທພຣະວິນຍານຂອງເຮົາລົງໃສ່ມະນຸດທັງປວງ, **ກຈກ** 2:17 (ຢອ 2:28). ພຣະຄຣິດຈຳຕ້ອງຢູ່ໃນຟ້າສະຫວັນຈົນກວ່າເຖິງເວລາທີ່ທຸກສິ່ງຈະຖືກຕັ້ງຂຶ້ນໃໝ່, **ກຈກ** 3:21. ເມື່ອເວລາກຳນົດຄົບບໍລິບູນແລ້ວ, ພຣະເຈົ້າຈະຮວບຮວມສິ່ງສາລະພັດໄວ້ໃນພຣະຄຣິດ, **ອຟຊ** 1:10.

ເຮົາຈະສະຖາປະນາສາດສະໜາຈັກຂອງເຮົາຂຶ້ນໃນບັນດາພວກເຂົາ, **3 ນຟ** 21:22.

ພຣະຜູ້ເປັນເຈົ້າໄດ້ມອບຂໍກະແຈແຫ່ງອານາຈັກ ແລະ ຍຸກສະໄໝແຫ່ງພຣະກິດຕິຄຸນເປັນເທື່ອສຸດທ້າຍໃຫ້, **ຄພ** 27:13. ຂໍກະແຈຂອງຍຸກສະໄໝນີ້ຈຶ່ງຖືກມອບໄວ້ຢູ່ໃນມືຂອງພວກທ່ານ, **ຄພ** 110:12–16. ຂໍກະແຈຂອງຍຸກສະໄໝທີ່ຜ່ານມາໄດ້ຖືກຟື້ນຟູຄືນມາໃໝ່ ໃນຍຸກສະໄໝຂອງຄວາມສົມບູນແຫ່ງເວລາ, **ຄພ** 128:18–21.

**ຍຸກສຸດທ້າຍ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ເຄື່ອງໝາຍແຫ່ງການເວລາ *ນຳອີກ*

ວັນເວລາທີ່ເຮົາມີຊີວິດຢູ່ຕອນນີ້. ຍຸກ (ຫລືຍຸກສະໄໝຂອງເວລາ) ກ່ອນການສະເດັດມາຄັ້ງທີສອງຂອງ ພຣະຜູ້ເປັນເຈົ້າ.

ພໍ່ຈະບອກເຖິງສິ່ງທີ່ຈະເກີດຂຶ້ນກັບພວກເຈົ້າໃນຍຸກສຸດທ້າຍ, **ປຖກ** 49:1. ຜູ້ໜຶ່ງຢູ່ໃນສະຫວັນສະຖານ ຜູ້ທີ່ຈະມາໃນທີ່ສຸດ, **ໂຢບ** 19:25. ໃນຍຸກສຸດທ້າຍ, ບ້ານຂອງພຣະຜູ້ເປັນເຈົ້າຈະຖືກສະຖາປະນາຂຶ້ນ, **ອຊຢ** 2:2.

ໃນຍຸກສຸດທ້າຍ ຄວາມລຳບາກຢ່າງຮ້າຍແຮງຈະເກີດຂຶ້ນ, **2 ຕມທ** 3:1–7. ໃນຍຸກສຸດທ້າຍ ຜູ້ຄົນທີ່ເວົ້າເຍາະເຍີ້ຍຈະປະຕິເສດການສະເດັດມາຄັ້ງທີສອງ, **2 ປຕ** 3:3–7.

ຂ້າພະເຈົ້າທຳນາຍຕໍ່ພວກທ່ານກ່ຽວກັບຍຸກສຸດທ້າຍ, **2 ນຟ** 26:14–30.

ດັ່ງນັ້ນ ສາດສະໜາຈັກຂອງເຮົາຈະຖືກເອີ້ນໃນຍຸກສຸດທ້າຍ, ວ່າສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, **ຄພ** 115:4.

ພຣະຄຣິດຈະສະເດັດມາໃນຍຸກສຸດທ້າຍ, **ມຊ** 7:60.

**ຍຸດຕິທຳ, ຄວາມຍຸດຕິທຳ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ເມດຕາ, ມີເມດຕາ, ຄວາມເມດຕາ *ນຳອີກ*

ຜົນສະທ້ອນທີ່ບໍ່ສິ້ນສຸດຂອງພອນສຳລັບຄວາມຄິດ ແລະ ການກະທຳທີ່ຊອບທຳ, ແລະການລົງໂທດສຳລັບບາບທີ່ບໍ່ກັບໃຈ. ຄວາມຍຸດຕິທຳເປັນກົດນິລັນດອນທີ່ຮຽກຮ້ອງການທຳໂທດໃນທຸກເທື່ອທີ່ລະເມີດກົດຂອງພຣະເຈົ້າ (ແອວ 42:13–24). ຄົນບາບຕ້ອງຮັບໂທດຖ້າຫາກເຂົາບໍ່ກັບໃຈ (ມຊຢ 2:38–39; ຄພ 19:17). ຖ້າຫາກເຂົາກັບໃຈ, ພຣະຜູ້ຊ່ວຍໃຫ້ລອດຈະໃຊ້ແທນໂທດຜ່ານການຊົດໃຊ້, ຮຽກຮ້ອງຄວາມເມດຕາ (ແອວ 34:16).

ບຸກຄົນທີ່ເຮັດບາບຈະຕ້ອງຕາຍ, **ອຊກ** 18:4. ສິ່ງທີ່ພຣະຜູ້ເປັນເຈົ້າຕ້ອງການຈາກພວກເຮົາແມ່ນໃຫ້ເຮັດສິ່ງທີ່ຖືກຕ້ອງ, **ມກ** 6:8.

ພຣະອົງທ່ຽງທຳ ແລະ ຈະໂຜດບາບຂອງພວກເຮົາ, **1 ຢຮ** 1:9.

ຄວາມຍຸດຕິທຳຂອງພຣະເຈົ້າໄດ້ແຍກຄົນຊົ່ວອອກຈາກຄົນຊອບທຳ, **1 ນຟ** 15:30. ການຊົດໃຊ້ເປັນການພຽງພໍກັບຂໍ້ຮຽກຮ້ອງຂອງຄວາມຍຸດຕິທຳຂອງພຣະອົງ, **2 ນຟ** 9:26. ມະນຸດຊາດທັງປວງຕົກແລ້ວ ແລະ ຢູ່ໃນກຳມືແຫ່ງຄວາມຍຸດຕິທຳ, **ແອວ** 42:14. ການຊົດໃຊ້ກໍພຽງພໍແກ່ຂໍ້ຮຽກຮ້ອງຂອງຄວາມຍຸດຕິທຳ, **ແອວ** 42:15. ລູກຄິດວ່າຄວາມເມດຕາຂະໂມຍຄວາມຍຸດຕິທຳໄດ້ບໍ, **ແອວ** 42:25. ຄວາມຍຸດຕິທຳຂອງພຣະເຈົ້າແຂວນຢູ່ເທິງຫົວຂອງທ່ານ ຍົກເວັ້ນແຕ່ທ່ານຈະກັບໃຈ, **ແອວ** 54:6.

ຄວາມຍຸດຕິທຳ ແລະ ການພິພາກສາເປັນໂທດ ຊຶ່ງຕັ້ງໄວ້ກັບກົດຂອງເຮົາ, **ຄພ** 82:4. ຄວາມຍຸດຕິທຳຈະດຳເນີນຕໍ່ໄປໃນທາງຂອງມັນເອງ ແລະ ອ້າງສິດໃນຄົນຂອງມັນເອງ, **ຄພ** 88:40. ບໍ່ມີຄົນໃດຈະຖືກຍົກເວັ້ນຈາກຄວາມຍຸດຕິທຳ ແລະ ກົດຂອງພຣະເຈົ້າ, **ຄພ** 107:84.

**ດານ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ບຸດຂອງຢາໂຄບ ແລະ ນາງບິນຮາ, ເອື້ອຍລ້ຽງຂອງນາງລາເຊັນ (ປຖກ 30:5–6)

*ເຜົ່າຂອງດານ:* ສຳລັບພອນຂອງຢາໂຄບກ່ຽວກັບດານ, ເບິ່ງ ປຖກ 49:16–18. ສຳລັບພອນຂອງໂມເຊກ່ຽວກັບເຜົ່າຂອງດານ, ເບິ່ງ ພບຍ 33:22. ຫລັງຈາກພວກເຂົາໄດ້ຕັ້ງຖິ່ນຖານຢູ່ການາອານແລ້ວ, ເຜົ່າຂອງດານໄດ້ຮັບແຜ່ນດິນສ່ວນນ້ອຍໜຶ່ງແຕ່ອຸດົມສົມບູນຫລາຍ (ຢຊ 19:40–48). ເຂົາເຈົ້າມີຄວາມຫຍຸ້ງຍາກຫລາຍທີ່ຈະປົກປ້ອງມັນຈາກຊາວອາໂມ (ຜປ 1:34) ແລະ ຈາກຊາວຟີລິດສະຕິນ (ຜປ 13:2, 25; 18:1). ຜົນກໍຄື, ຊາວດານໄດ້ຍ້າຍຂຶ້ນໄປທາງເໜືອຂອງຟີລິດສະຕິນ (ຜປ 18), ອ້ອມເມືອງລາອິດ, ແລະ ຕັ້ງຊື່ເມືອງນີ້ວ່າ ດານ. ເມືອງນີ້ເປັນທີ່ຮູ້ຈັກກັນດີຢູ່ໃນຂອບເຂດຂອງຟີລິດສະຕິນ, ຊຶ່ງຕໍ່ອອກໄປ "ຈາກເມືອງດານເຖິງເມືອງເບເອນເຊບາ."

**ດານີເອນ**

ຜູ້ສຳຄັນໃນພຣະທຳດານີເອນໃນພຣະຄຳພີເດີມ; ສາດສະດາຂອງພຣະເຈົ້າ ແລະ ເປັນຜູ້ທີ່ມີສັດທາອັນຍິ່ງໃຫຍ່.

ບໍ່ມີໃຜຮູ້ກ່ຽວກັບພໍ່ແມ່ຂອງລາວ, ເຖິງແມ່ນລາວປະກົດວ່າມາຈາກເຊື້ອສາຍຂອງກະສັດ (ດນອ 1:3). ລາວໄດ້ຖືກຈັບໄປຫາບາບີໂລນ, ບ່ອນທີ່ລາວໄດ້ຊື່ໃໝ່ວ່າ ເບັນເຕຊັດຊາເຣ (ດນອ 1:6–7). ດານີເອນ ແລະ ອີກສາມຄົນທີ່ຖືກຈັບໄປກໍໄດ້ປະຕິເສດອາຫານຂອງກະສັດທີ່ກ່ຽວພັນເລື່ອງສາດສະໜາ (ດນອ 1:8–16).

ດານີເອນເປັນທີ່ມັກຊອບຂອງເນບູກາດເນັດສາ ແລະ ດາຣິອຸດ ເພາະການແປຄວາມຝັນຂອງລາວ (ດນອ 2; 4; 6). ລາວຍັງໄດ້ອ່ານ ແລະ ແປຖ້ອຍຄຳທີ່ຂຽນໄວ້ຢູ່ເທິງຝາ (ດນອ 5). ສັດຕູຂອງລາວໄດ້ວາງແຜນກຳຈັດລາວ, ແລະ ລາວໄດ້ຖືກໂຍນເຂົ້າຖ້ຳສິງ, ແຕ່ພຣະຜູ້ເປັນເຈົ້າໄດ້ຮັກສາຊີວິດຂອງລາວໄວ້ (ດນອ 6).

*ພຣະທຳດານີເອນ:* ໜັງສືເຫລັ້ມນີ້ມີຢູ່ດ້ວຍກັນສອງພາກ: ບົດທີ 1–6 ເປັນເລື່ອງລາວກ່ຽວກັບດານີເອນ ແລະ ເພື່ອນສາມຄົນຂອງລາວ; ບົດທີ 7–12 ເປັນຄຳທຳນາຍກ່ຽວກັບສິ່ງທີ່ດານີເອນໄດ້ເຫັນ. ໜັງສືສິດສອນເຖິງຄວາມສຳຄັນຂອງການຊື່ສັດຕໍ່ພຣະເຈົ້າ ແລະ ສະແດງວ່າພຣະຜູ້ເປັນເຈົ້າອວຍພອນຄົນທີ່ຊື່ສັດ.

ສ່ວນໃຫຍ່ໃນປຶ້ມແມ່ນການແປຄວາມຝັນຂອງກະສັດເນບູກາດເນັດສາ. ໃນຄວາມຝັນ, ອານາຈັກຂອງພຣະເຈົ້າໃນຍຸກສຸດທ້າຍ ໄດ້ຖືກປຽບທຽບໃສ່ກັບຫີນທີ່ຖືກຕັດອອກມາຈາກພູ. ຫີນນັ້ນຈະກິ້ງລົງໄປຈົນເຕັມທົ່ວແຜ່ນດິນໂລກ (ດນອ 2; ເບິ່ງ ຄພ 65:2 ນຳອີກ).

**ດາມັສກັດ**

ເມືອງເກົ່າແກ່ຂອງຊີເຣຍ.

ດາມັສກັດຕັ້ງຢູ່ໃນທົ່ງທີ່ອຸດົມສົມບູນ ຢູ່ແຄມຖິ່ນແຫ້ງແລ້ງກັນດານ ແລະ ມີນ້ຳໃຊ້ຢ່າງຫລວງຫລາຍຈາກແມ່ນ້ຳບາຣາດາ. ມັນ

ຖືກກ່າວເຖິງເລື້ອຍໆຢູ່ໃນພຣະຄຳພີ (ເລີ່ມຕົ້ນດ້ວຍ ປຖກ 14:15). ໂປໂລພວມເດີນທາງໄປຫາດາມັສກັດ ເມື່ອພຣະຜູ້ເປັນເຈົ້າທີ່ໄດ້ຟື້ນຄືນພຣະຊົນແລ້ວໄດ້ມາປະກົດຕໍ່ລາວ (ກຈກ 9:1–27; 22:5–16; 26:12–20).

**ດາຣີອຸດ.** *ເບິ່ງ* ບາເບນ, ບາບີໂລນ *ນຳອີກ*

ໃນພຣະຄຳພີເດີມ, ກະສັດຂອງເມເດຍຜູ້ໄດ້ປົກຄອງໃນບາບີໂລນ ຫລັງຈາກການສິ້ນຊີວິດຂອງເບັນຊັດຊາເຣ (ດນອ 5:31; 6:9, 25–28; 9:1; 11:1).

**ດາວິດ.** *ເບິ່ງ* ບັດເຊບາ; ເພງສັນລະເສີນ *ນຳອີກ*

ກະສັດຂອງອິດສະຣາເອນໃນສະໄໝບູຮານໃນພຣະຄຳພີເດີມ.

ດາວິດ ເປັນລູກຊາຍຂອງເຢຊີຂອງເຜົ່າຢູດາ. ລາວເປັນຊາຍໜຸ່ມທີ່ກ້າຫານ ຜູ້ເຄີຍຂ້າໂຕສິງ, ໂຕໝີ, ແລະ ຍັກໃຫຍ່ໂກລີອາດຊາວຟີລິດສະຕິນ (1 ຊມອ 17). ດາວິດໄດ້ຖືກເລືອກ ແລະ ຖືກເຈີມໃຫ້ເປັນກະສັດຂອງອິດສະຣາເອນ. ເຊັ່ນດຽວກັບໂຊນ, ໃນຊີວິດຕອນເປັນຜູ້ໃຫຍ່ຂອງລາວ, ລາວໄດ້ເຮັດຄວາມຜິດອາຊະຍາກຳທີ່ຮ້າຍແຮງ, ແຕ່ບໍ່ເໝືອນໂຊນ, ລາວສາມາດສຳນຶກຜິດ. ສະນັ້ນລາວຈຶ່ງສາມາດພົບການໃຫ້ອະໄພ, ຍົກເວັ້ນແຕ່ໃນກໍລະນີຂອງການຂ້າອູຣີອາ (ຄພ 132:39). ຊີວິດຂອງລາວສາມາດແຍກອອກເປັນສີ່ພາກສ່ວນໄດ້: (1) ທີ່ເບັດເລເຮັມ, ບ່ອນລາວເປັນຄົນລ້ຽງແກະ (1 ຊມອ 16–17); (2) ໃນວັງຂອງກະສັດໂຊນ (1 ຊມອ 18:1–19:18); (3) ເປັນຜູ້ຫລົບໄພ (1 ຊມອ 19:18–31:13; 2 ຊມອ 1); (4) ເປັນກະສັດປົກຄອງຢູດາທີ່ເຮັບໂຣນ (2 ຊມອ 2–4), ແລະ ຕໍ່ມາເປັນກະສັດປົກຄອງອິດສະຣາເອນທັງໝົດ (2 ຊມອ 5–24; 1 ກສ 1:1–2:11).

ບາບຂອງດາວິດທີ່ເປັນຊູ້ກັບບັດເຊບາໄດ້ນຳໂຊກຮ້າຍຫລາຍຢ່າງມາສູ່ຊີວິດຊ່ວງໄລຍະຊາວປີສຸດທ້າຍຂອງເພິ່ນ. ປະຊາຊາດທັງປວງໄດ້ຈະເລີນກ້າວໜ້າລະຫວ່າງການປົກຄອງຂອງເພິ່ນ, ແຕ່ດາວິດເອງໄດ້ຮັບທຸກທໍລະມານຈາກຜົນສະທ້ອນທີ່ມາຈາກບາບຂອງເພິ່ນ. ມີການຜິດຖຽງກັນຢູ່ໃນຄອບຄົວບໍ່ໄດ້ຂາດ ຊຶ່ງໃນກໍລະນີຂອງອັບຊາໂລມ ແລະ ອາໂດນີຢາ, ໄດ້ສິ້ນສຸດລົງດ້ວຍການກະບົດ. ເຫດການເຫລົ່ານີ້ໄດ້ເຮັດໃຫ້ການປະກາດຂອງນາທານຕໍ່ດາວິດເກີດເປັນຈິງ ເພາະການບາບຂອງເພິ່ນ (2 ຊມອ 12:7–13).

ເຖິງແມ່ນຈະມີເລື່ອງພິນາດເຫລົ່ານີ້, ແຕ່ການປົກຄອງຂອງດາວິດເປັນຊ່ວງໄລຍະທີ່ຮຸ່ງເຫລື້ອມທີ່ສຸດໃນປະຫວັດສາດຂອງຊາວອິດສະຣາເອນ, ເພາະ (1) ເພິ່ນໄດ້ເຕົ້າໂຮມເຜົ່າຕ່າງໆເຂົ້າກັນເປັນປະຊາຊາດດຽວ, (2) ເພິ່ນສາມາດຄອບຄອງປະເທດໄດ້ໂດຍປາດສະຈາກຂໍ້ໂຕ້ແຍ້ງໃດໆ, (3) ເພິ່ນປົກຄອງໂດຍມີສາດສະໜາເປັນພື້ນຖານ ເພື່ອວ່າພຣະປະສົງຂອງພຣະເຈົ້າຈະໄດ້ເປັນກົດຂອງອິດສະຣາເອນ. ດ້ວຍເຫດຜົນເຫລົ່ານີ້, ຕໍ່ມາການປົກຄອງຂອງດາວິດຈຶ່ງເຫັນວ່າເປັນຍຸກທອງຄຳ ແລະ ເປັນຮູບແບບຂອງຍຸກທີ່ຮຸ່ງເຮືອງໃນເວລາທີ່ພຣະເມຊີອາຈະສະເດັດມາ (ອຊຢ 16:5; ຢມຢ 23:5; ອຊກ 37:24–28).

ຊີວິດຂອງດາວິດສະແດງເຖິງຄວາມຈຳເປັນທີ່ທຸກຄົນຕ້ອງອົດທົນຈົນເຖິງທີ່ສຸດໃນຄວາມຊອບທຳ. ຕອນຍັງໜຸ່ມ, ເພິ່ນຖືກກ່າວເຖິງວ່າເປັນຊາຍທີ່ເຮັດຕາມພຣະຜູ້ເປັນເຈົ້າ "ປະສົງ" (1 ຊມອ 13:14); ເມື່ອເປັນຜູ້ໃຫຍ່, ເພິ່ນໄດ້ເວົ້າດ້ວຍພຣະວິນຍານ ແລະ ໄດ້ຮັບການເປີດເຜີຍຫລາຍຢ່າງ. ແຕ່ເພິ່ນຕ້ອງໄດ້ຊົດໃຊ້ຢ່າງໜັກສຳລັບການບໍ່ເຊື່ອຟັງຂອງເພິ່ນຕໍ່ພຣະບັນຍັດຂອງພຣະເຈົ້າ (ຄພ 132:39).

**ດີພ້ອມທຸກຢ່າງ**

ພັດທະນາເຖິງສົມບູນແບບ, ທັງໝົດ, ແລະເຕັມສ່ວນ; ຊອບທຳແທ້ໆ. ດີພ້ອມທຸກຢ່າງກໍສາມາດໝາຍເຖິງປາດສະຈາກບາບ ຫລືຄວາມຊົ່ວຮ້າຍ. ພຣະຄຣິດພຽງຜູ້ດຽວເທົ່ານັ້ນທີ່ດີພ້ອມທຸກຢ່າງແທ້ໆ. ຜູ້ຕິດຕາມທີ່ແທ້ຈິງຂອງພຣະຄຣິດ ອາດກາຍເປັນຜູ້ທີ່ດີພ້ອມທຸກຢ່າງ ຜ່ານພຣະຄຸນ ແລະ ການຊົດໃຊ້ຂອງພຣະອົງ.

ຈົ່ງສັດຊື່ຕໍ່ພຣະຜູ້ເປັນເຈົ້າ, **1 ກສ** 8:61. ເຈົ້າທັງຫລາຍຕ້ອງເປັນຄົນດີທີ່ສຸດ, ເໝືອນຢ່າງພຣະບິດາຂອງເຈົ້າຜູ້ສະຖິດຢູ່ໃນສະຫວັນເປັນຜູ້ດີທີ່ສຸດ, **ມທ** 5:48 (3 ນຟ 12:48). ຖ້າຜູ້ໃດບໍ່ໄດ້ເຮັດຜິດທາງວາຈາ, ຜູ້ນັ້ນກໍເປັນຄົນດີຄົບຖ້ວນ, **ຢກບ** 3:2.

ສັດທາບໍ່ແມ່ນການມີຄວາມຮູ້ອັນສົມບູນເຖິງເລື່ອງຕ່າງໆ, **ແອວ** 32:21, 26. ມີການຊົດໃຊ້ເກີດຂຶ້ນ ເພື່ອພຣະເຈົ້າຈະເປັນພຣະເຈົ້າທີ່ດີພ້ອມ, **ແອວ** 42:15. ໂມໂຣໄນເປັນຄົນທີ່ສະຫລຽວສະຫລາດ, **ແອວ** 48:11–13, 17–18. ພຣະວິນຍານຂອງພຣະຄຣິດໄດ້ຖືກມອບໃຫ້ແກ່ມະນຸດທຸກຄົນເພື່ອຕັດສິນ ແລະ ຮູ້ດ້ວຍຄວາມຮູ້ອັນສົມບູນວ່າ ສິ່ງນັ້ນມາຈາກພຣະເຈົ້າ ຫລື ມາຈາກມານ, **ມຣນ** 7:15–17. ຈົ່ງມາຫາພຣະຄຣິດ, ແລະ ຖືກເຮັດໃຫ້ເປັນຄົນດີພ້ອມໃນພຣະອົງ, **ມຣນ** 10:32.

ຈົ່ງດຳເນີນຕໍ່ໄປດ້ວຍຄວາມອົດທົນຈົນກວ່າພວກເຈົ້າຈະຖືກເຮັດໃຫ້ດີພ້ອມ, **ຄພ** 67:13. ຜູ້ຄົນເຫລົ່ານີ້ຄືຜູ້ທີ່ທ່ຽງທຳ ແລະ ຖືກເຮັດໃຫ້ດີພ້ອມທຸກຢ່າງຜ່ານພຣະເຢຊູ, **ຄພ** 76:69. ຕຳແໜ່ງໃນສາດສະໜາຈັກ ແມ່ນເພື່ອການເຮັດໃຫ້ໄພ່ພົນຂອງເຮົາດີພ້ອມ, **ຄພ** 124:143 (ອຟຊ 4:11–13). ຄົນເປັນຈະດີພ້ອມບໍ່ໄດ້ຖ້າຫາກປາດສະຈາກຄົນຕາຍຂອງພວກເຂົາ, **ຄພ** 128:15, 18.

ໂນອາເປັນຄົນທ່ຽງທຳ, ແລະ ດີພ້ອມໃນລຸ້ນຂອງລາວ, **ມຊ** 8:27.

**ດື່ມ, ຖືກດື່ມ.** *ເບິ່ງ* ພຣະວາຈາແຫ່ງປັນຍາ

**ດູໝິ່ນ.** *ເບິ່ງ* ກຽດຊັງ, ຄວາມກຽດຊັງ

**ເດັກ, ເດັກນ້ອຍ.** *ເບິ່ງ* ການບັບຕິສະມາຂອງເດັກແດງທາລົກ; ຄອບຄົວ; ຊົດໃຊ້, ການຊົດໃຊ້; ພອນ, ໃຫ້ພອນ, ເປັນພອນ—ການໃຫ້ພອນແກ່ເດັກນ້ອຍ; ລອດ, ຄວາມລອດ—ຄວາມລອດຂອງເດັກນ້ອຍ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ *ບຳອິກ*

ຄົນໜຸ່ມ, ຜູ້ທີ່ຍັງບໍ່ເຕັມກະສຽນເທື່ອ. ພໍ່ແມ່ຕ້ອງຫັດໃຫ້ລູກເພື່ອເຊື່ອຟັງຕາມພຣະປະສົງຂອງພຣະເຈົ້າ. ເດັກນ້ອຍບໍ່ມີບາບຈົນກວ່າເຂົາເຖິງອາຍຸທີ່ຮູ້ຈັກຮັບຜິດຊອບ (ມຣນ 8:22; ຄພ 68:27).

ເດັກນ້ອຍຄືຂອງຂວັນຈາກພຣະຜູ້ເປັນເຈົ້າ, **ພສສ** 127:3–5. ຈົ່ງສັ່ງສອນລູກໃຫ້ຮູ້ທາງດຳເນີນຊີວິດ, **ສພສ** 22:6.

ຈົ່ງປ່ອຍເດັກນ້ອຍມາຫາເຮົາ ແລະ ຢ່າຫ້າມພວກເຂົາ, **ມທ** 19:14. ຈົ່ງເຊື່ອຟັງບິດາມານດາຂອງຕົນ, **ອຟຊ** 6:1–3 (ກລຊ 3:20).

ປາດສະຈາກການຕີກ, ອາດາມ ແລະ ເອວາຄົງບໍ່ມີລູກຫລານ, **2 ນຟ** 2:22–23. ຈົ່ງສິດສອນລູກຫລານໃຫ້ເດີນໃນທາງແຫ່ງຄວາມຈິງ ແລະ ຄວາມມີສະຕິສຳປະສັນຍະ, **ມຊຢ** 4:14–15. ເດັກນ້ອຍໆມີຊີວິດນິລັນດອນ, **ມຊຢ** 15:25. ພຣະເຢຊູໄດ້ເອົາເດັກນ້ອຍມາ ແລະ ອວຍພອນພວກເຂົາ, **3 ນຟ** 17:21. ລູກຫລານທັງໝົດຂອງເຈົ້າຈະໄດ້ຮັບການສິດສອນເລື່ອງພຣະຜູ້ເປັນເຈົ້າ; ແລະ ສັນຕິສຸກຂອງລູກຫລານຂອງເຈົ້າຈະຍິ່ງໃຫຍ່, **3 ນຟ** 22:13 (ອຊຢ 54:13). ເດັກນ້ອຍໆບໍ່ຕ້ອງການການກັບໃຈ ຫລື ຮັບບັບຕິສະມາ, **ມຣນ** 8:8–24.

ເດັກນ້ອຍໆໄດ້ຮັບການໄຖ່ນັບແຕ່ການວາງຮາກຖານຂອງໂລກຜ່ານພຣະອົງດຽວທີ່ຖືກຳເນີດຂອງເຮົາ, **ຄພ** 29:46–47. ພໍ່ແມ່ຕ້ອງສິດສອນຫລັກທຳພຣະກິດຕິຄຸນ ແລະ ພາກປະຕິບັດໃຫ້ແກ່ລູກໆ, **ຄພ** 68:25, 27–28. ເດັກນ້ອຍໆບໍລິສຸດຜ່ານການຊົດໃຊ້ຂອງພຣະຄຣິດ, **ຄພ** 74:7. ພໍ່ແມ່ຖືກບັນຊາໃຫ້ລ້ຽງດູລູກໆຂອງເຂົາເຈົ້າໃນຄວາມສະຫວ່າງ ແລະ ຄວາມຈິງ, **ຄພ** 93:40. ເດັກນ້ອຍຜູ້ໄດ້ຕາຍກ່ອນອາຍຸທີ່ຮູ້ຈັກຮັບຜິດຊອບກໍລອດໃນອານາຈັກຊັ້ນສູງ, **ຄພ** 137:10.

**ເດເຊເຣັດ.** *ເບິ່ງ* ຊາວຢາເຣັດ *ບຳອິກ*

ໃນພຣະຄຳພີມໍມອນ, ໝາຍຄວາມວ່າ "ນໍາເຜິ້ງ" ໃນພາສາຂອງຊາວຢາເຣັດ (ອທ 2:3).

**ເດໂບລາ**

ໃນພຣະຄຳພີເດີມ, ສາດສະດາຍິງຜູ້ຕັດສິນອິດສະຣາເອນ ແລະ ຊຸກຍູ້ບາຣັກໃຫ້ຕໍ່ຕ້ານຊາວການາອານ (ຜປ 4). ເພງຂອງເດໂບຣາ

ແລະ ບາຣັກ ສະຫລອງການປົດປ່ອຍຂອງຊາວອິດສະຣາເອນຈາກຄວາມເປັນທາດ (ຜປ 5).

**ເດລີລາ.** *ເບິ່ງ* ຟີລິດສະຕິນ *ນຳອີກ*

ຍິງຊາວຟີລິດສະຕິນໃນພຣະຄຳພີເດີມ ຜູ້ໄດ້ຫລອກລວງ ແລະ ທໍລະຍົດຕໍ່ແຊມຊັນ (ຜປ 16).

**ດົນໃຈ, ການດົນໃຈ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ; ພຣະວິນຍານບໍລິສຸດ *ນຳອີກ*

ພຣະເຈົ້າໄດ້ປະທານການນຳພາແຫ່ງສະຫວັນໃຫ້ແກ່ມະນຸດ. ການດົນໃຈມັກຈະມາເຖິງໂດຍທາງພຣະວິນຍານ ໃນຫລາຍວິທີທາງສູ່ຈິດໃຈ ຫລື ຫົວໃຈຂອງບຸກຄົນ.

ຫລັງຈາກໄຟກໍມີສຽງກະຊິບເບົາໆດັ່ງແວ່ວມາ, **1 ກສ** 19:12.

ພຣະວິນຍານບໍລິສຸດຈະສິດສອນພວກເຈົ້າທຸກສິ່ງ ແລະ ຈະເຕືອນໃຫ້ພວກເຈົ້າລະນຶກເຖິງທຸກສິ່ງ, **ຢຮ** 14:26. ພຣະວິນຍານແຫ່ງຄວາມຈິງຈະນຳເຈົ້າທັງຫລາຍໄປສູ່ຄວາມຈິງທັງໝົດ, **ຢຮ** 16:13.

ພຣະວິນຍານໄດ້ນຳຂ້າພະເຈົ້າໄປ, ໂດຍບໍ່ຮູ້ລ່ວງໜ້າເຖິງສິ່ງທີ່ຂ້າພະເຈົ້າຄວນຈະເຮັດ, **1 ນຟ** 4:6. ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ເຂົ້າມາສູ່ຈິດໃຈຂ້າພະເຈົ້າ, **ອນ** 1:10. ທຸກສິ່ງທີ່ເຊື້ອເຊີນ ແລະ ຊັກຈູງໃຫ້ມະນຸດເຮັດຄວາມດີ ແມ່ນມາຈາກການດົນໃຈຈາກພຣະເຈົ້າ, **ມຣນ** 7:13–16.

ເຮົາບໍ່ໄດ້ກ່າວໃຫ້ຄວາມສະຫງົບແກ່ຈິດໃຈຂອງເຈົ້າບໍ, **ຄພ** 6:23. ເຮົາຈະບອກເຈົ້າໃນຈິດໃຈ ແລະ ໃນຫົວໃຈຂອງເຈົ້າ, **ຄພ** 8:2. ພຣະວິນຍານຂອງເຮົາຈະເຮັດໃຫ້ຈິດໃຈຂອງເຈົ້າແຈ້ງສະຫວ່າງ, ຊຶ່ງຈະເຮັດໃຫ້ຈິດວິນຍານຂອງເຈົ້າເຕັມໄປດ້ວຍຄວາມສຸກ, **ຄພ** 11:13. ມັນຈະຖືກມອບໃຫ້ເຈົ້າໃນເວລາທີ່ເຈົ້າຈະກ່າວ ຫລື ຂຽນ, **ຄພ** 24:6 (ຄພ 84:85). ສຽງອັນເບົາໆໄດ້ສິ່ມຜ່ານ ແລະ ສຽບແທງທຸກສິ່ງທັງປວງ, **ຄພ** 85:6.

**ດົນຕີ, ເພງ.** *ເບິ່ງ* ເພງສວດ; ຮ້ອງ *ນຳອີກ*

ທຳນອງເພງ ແລະ ເພງສວດ ທີ່ຮ້ອງ ແລະອະທິຖານນັບຕັ້ງແຕ່ສະໄໝຂອງພຣະຄຣິສຕະທຳຄຳພີເປັນຕົ້ນມາ ເພື່ອສະແດງຄວາມຊື່ນຊົມ, ສັນລະເສີນ, ແລະ ນະມັດສະການ (2 ຊມອ 6:5). ມັນສາມາດເປັນຮູບແບບຂອງການອະທິຖານ. ເພງສັນລະເສີນອາດຖືກຮ້ອງດ້ວຍທຳນອງເພງທີ່ລຽບງ່າຍ ແລະ ເຄື່ອງຫລິ້ນດົນຕີ.

ນາງ ມີຣີອາມ, ເອື້ອຍຂອງອາໂຣນ ແລະ ໂມເຊ, ໄດ້ຕີກອງ ແລະ ພວກຜູ້ຍິງຟ້ອນລຳ, **ອພຍ** 15:20. ຊາວເລວີຜູ້ທີ່ເປັນນັກດົນຕີ ໄດ້ຕີບແສ່ງ ແລະ ດີດພິນ ແລະ ປະໂລຫິດຮ້ອຍຊາວຄົນໄດ້ເປົ່າແກ, **2 ຂຄ** 5:12.

ພຣະເຢຊູ ແລະ ສາວົກສິບສອງຄົນໄດ້ຮ້ອງເພງສວດໃນລະຫວ່າງເຂົ້າແລງຄາບສຸດທ້າຍ, **ມທ** 26:30. ຈົ່ງສິດສອນ ແລະ ຕັກເຕືອນກັນ ແລະກັນ ດ້ວຍເພງຍ້ອງຍໍສັນລະເສີນ ແລະເພງນະມັດສະການ, **ກລຊ** 3:16.

ພວກທ່ານຮູ້ສຶກຢາກຮ້ອງເພງສັນລະເສີນຄວາມຮັກທີ່ໄຖ່ບໍ, **ແອວ** 5:26.

ພຣະວິນຍານຂອງພຣະເຈົ້າເບີກບານໃນເພງຈາກໃຈ; ແທ້ຈິງແລ້ວ, ເພງຂອງຄົນຊອບທຳເປັນຄຳອະທິຖານ, **ຄພ** 25:12. ຈົ່ງສັນລະເສີນພຣະຜູ້ເປັນເຈົ້າດ້ວຍການຮ້ອງເພງ, ດ້ວຍດົນຕີ, ແລະ ດ້ວຍການເຕັ້ນລຳ, **ຄພ** 136:28.

**ເດີນ, ເດີນໄປກັບພຣະເຈົ້າ.** *ເບິ່ງ* ຊອບທຳ, ຄວາມຊອບທຳ; ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ; ວິທີທາງ *ນຳອີກ*

ຄວາມຖືກຕ້ອງປອງດອງກັບຄຳສອນຂອງພຣະເຈົ້າ ແລະ ການດຳລົງຊີວິດຕາມທີ່ພຣະເຈົ້າປະສົງໃຫ້ຜູ້ຄົນຂອງພຣະອົງດຳລົງຊີວິດ; ການຍິນຍອມ ແລະ ເຊື່ອຟັງຕໍ່ການກະຕຸ້ນຂອງພຣະວິນຍານບໍລິສຸດ.

ເຮົາຈະທົດສອບເບິ່ງວ່າ ພວກເຂົາຈະເຮັດຕາມຂໍ້ຄຳສັ່ງຂອງເຮົາຫລືບໍ່, **ອພຍ** 16:4. ພຣະຜູ້ເປັນເຈົ້າໃຫ້ຂອງດີແກ່ຜູ້ທີ່ເດີນໄປຢ່າງພາກພູມໃຈຢ່າງບໍ່ອັ້ນ, **ພສສ** 84:11. ຄົນທີ່ຮັກສາກົດບັນຍັດທັງຫລາຍຂອງເຮົາ ແລະ ເຊື່ອຟັງຂໍ້ຄຳສັ່ງທັງໝົດຂອງເຮົາ ຈະເປັນຜູ້ຄົນຂອງເຮົາ, **ອຊກ** 11:20–21 (ພບຍ 8:6). ສິ່ງທີ່ພຣະຜູ້ເປັນ

ເຈົ້າຕ້ອງການຈາກພວກເຈົ້ານັ້ນແມ່ນໃຫ້ໃຊ້ຊີວິດຢ່າງຖ່ອມຕົວກັບພຣະເຈົ້າ, **ມກ** 6:8 (ຄພ 11:12).

ດຳເນີນຊີວິດຢູ່ໃນຄວາມສະຫວ່າງ, ເໝືອນດັ່ງພຣະເຈົ້າຢູ່ໃນຄວາມສະຫວ່າງ, **1 ຢຮ** 1:7 (2 ຢຮ 1:6; 3 ຢຮ 1:4; 4 ນຟ 1:12).

ເດີນໄປໃນທາງທີ່ຄັບ ຊຶ່ງນຳໄປສູ່ຊີວິດ, **2 ນຟ** 33:9. ກະສັດເບັນຢາມິນມີຈິດສຳນຶກອັນໃສສະອາດຕໍ່ພຣະພັກຂອງພຣະເຈົ້າ, **ມຊຢ** 2:27. ໜ້າທີ່ຂອງທ່ານ ຄືທີ່ຈະເດີນໄປໂດຍບໍ່ມີຄວາມຜິດ ຕາມລະບຽບອັນສັກສິດຂອງພຣະເຈົ້າ, **ແອວ** 7:22.

ສະມາຊິກຂອງສາດສະໜາຈັກຈະສະແດງໃຫ້ປະຈັກເຖິງການດຳເນີນຊີວິດ ແລະ ການເວົ້າຈາຢ່າງພຣະເຈົ້າ, **ຄພ** 20:69. ຈົ່ງເອົາໃຈໃສ່ຕໍ່ສາດສະດາ ແລະ ເດີນໄປໃນຄວາມບໍລິສຸດທັງໝົດຢູ່ຕໍ່ໜ້າພຣະພັກຂອງພຣະຜູ້ເປັນເຈົ້າ, **ຄພ** 21:4. ສອນລູກໆໃຫ້ອະທິຖານ ແລະ ເດີນໄປຢ່າງພາກພູມໃຈຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, **ຄພ** 68:28.

ສະໜິດຢູ່ໃນເຮົາ, ແລະ ເຮົາຈະແນບສະໜິດຢູ່ໃນເຈົ້າ; ສະນັ້ນຈົ່ງເດີນໄປກັບເຮົາ, **ມຊ** 6:34.

**ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ.** *ເບິ່ງ* ການຂາດສິນທຳທາງເພດ; ການລ່ວງປະເວນີ; ກິເລດຕັນຫາ; ພົມມະຈັນ; ຫລິ້ນຊູ້ *ນຳອີກ*

ຄວາມມັກ ຫລື ຄວາມປາດຖະໜາສຳລັບຄວາມເພິ່ງພໍໃຈທາງຮ່າງກາຍ, ໂດຍສະເພາະການຂາດສິນທຳທາງເພດ.

ເມຍຂອງນາຍກໍຫລົງມັກໂຢເຊັບ, **ປຖກ** 39:7.

ຜູ້ໃດທີ່ແນມເບິ່ງຜູ້ຍິງດ້ວຍໃຈຄິດຢາກໄດ້ຍິງນັ້ນ, ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ, **ມທ** 5:28 (3 ນຟ 12:28). ໃຫ້ງົດເວັ້ນຈາກຕັນຫາແນວມະນຸດ, ຊຶ່ງທຳການຕໍ່ສູ້ຈິດວິນຍານ, **1 ປຕ** 2:11. ຕັນຫາຂອງເນື້ອກາຍ ແລະ ຕັນຫາຂອງຕາ ບໍ່ໄດ້ເກີດມາຈາກພຣະບິດາ, **1 ຢຮ** 2:16.

ບໍ່ຫລົງໄຫລ ແລະ ໄຝ່ຝັນຢູ່ກັບສິ່ງທີ່ເຫັນໄດ້, **ແອວ** 39:9.

ໂດຍການລ່ວງລະເມີດກົດທີ່ສັກສິດເຫລົ່ານີ້, ມະນຸດຈຶ່ງກັບມີຕັນຫາລາຄະ, **ຄພ** 20:20. ຖ້າຫາກຄົນໃດຫລິ້ນຊູ້ໃນໃຈຂອງເຂົາ, ເຂົາຈະບໍ່ມີພຣະວິນຍານສະຖິດຢູ່ນຳ, **ຄພ** 63:16. ຈົ່ງຢຸດຈາກຄວາມປາດຖະໜາທີ່ຕັນຫາລາມົກທັງໝົດຂອງພວກເຈົ້າ, **ຄພ** 88:121.

ມະນຸດໄດ້ເລີ່ມມີການມະລົນ, ຕັນຫາໜ້າມືດ, ແລະ ຕ່ຳຊ້າ, **ມຊ** 5:13 (ມຊຢ 16:3; ມຊ 6:49).

**ຕາ**

ໃນພຣະຄຳພີ, ສ່ວນຫລາຍແລ້ວຕາມັກຈະຖືກໃຊ້ເປັນສັນຍາລັກເຖິງຄວາມສາມາດຂອງບຸກຄົນ ທີ່ຈະຮັບເອົາຄວາມສະຫວ່າງຂອງພຣະເຈົ້າ. ຕາມສັນຍາລັກແລ້ວ, ຕາຂອງບຸກຄົນຍັງສະແດງເຖິງສະພາບທາງວິນຍານ ແລະ ຄວາມເຂົ້າໃຈສິ່ງທີ່ເປັນຂອງພຣະເຈົ້ານຳອີກ.

ພຣະບັນຍັດຂອງພຣະຜູ້ເປັນເຈົ້າແມ່ນບໍລິສຸດ, ເຮັດໃຫ້ດວງຕາແຈ້ງສະຫວ່າງຂຶ້ນ, **ພສສ** 19:8. ຄົນໂງ່ຈ້າມີຕາແຕ່ເບິ່ງບໍ່ເຫັນ, **ຢມຢ** 5:21 (ມຣກ 8:18).

ຕາເປັນດັ່ງແສງສະຫວ່າງສຳລັບຮ່າງກາຍ, **ມທ** 6:22 (ລກ 11:34; 3 ນຟ 13:22; ຄພ 88:67). ຕາຂອງພວກເຈົ້າກໍເປັນສຸກເພາະພວກເຈົ້າໄດ້ເຫັນ, **ມທ** 13:16. ຕາທີ່ເຂົ້າໃຈຂອງພວກທ່ານຈະໄດ້ຮັບຄວາມສະຫວ່າງ, **ອຟຊ** 1:17–18.

ວິບັດແກ່ຄົນສະຫລາດໃນສາຍຕາຂອງຕົນ, **2 ນຟ** 15:21 (ອຊຢ 5:21). ເຂົາເຈົ້າໄດ້ເລີ່ມຖືສິນອົດເຂົ້າ ແລະ ອະທິຖານເພື່ອໃຫ້ຕາຂອງຜູ້ຄົນເປີດ, **ມຊຢ** 27:22. ຊາຕານໄດ້ເຮັດໃຫ້ຕາຂອງພວກເຂົາບອດ, **3 ນຟ** 2:2. ບໍ່ມີຜູ້ໃດທີ່ມີອຳນາດນຳພຣະຄຳພີມໍມອນອອກມາໄດ້ນອກຈາກເພາະເຫັນແກ່ລັດສະໝີພາບຂອງພຣະເຈົ້າແຕ່ຢ່າງດຽວເທົ່ານັ້ນ, **ມມ** 8:15.

ໂດຍອຳນາດຂອງພຣະວິນຍານ ຕາຂອງພວກເຮົາໄດ້ເປີດ ແລະ ຄວາມເຂົ້າໃຈຂອງພວກເຮົາໄດ້ຮັບຄວາມສະຫວ່າງ, **ຄພ** 76:12. ແມ່ນຜ່ານພຣະອົງຜູ້ເຮັດໃຫ້ດວງຕາຂອງພວກເຈົ້າແຈ້ງສະຫວ່າງ, **ຄພ** 88:11. ຖ້າຫາກ

ດວງຕາຂອງພວກເຈົ້າເຫັນແກ່ລັດສະໝີພາບຂອງເຮົາແຕ່ຢ່າງດຽວ, ທັງຮ່າງກາຍຂອງພວກເຈົ້າຈະເຕັມ ໄປດ້ວຍຄວາມສະ ຫວ່າງ, **ຄພ** 88:67.

**ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ**

ບຸກຄົນທີ່ຍອມສູນເສຍຊີວິດຂອງຕົນ ແທນການປະຖິ້ມພຣະຄຣິດ, ພຣະກິດຕິຄຸນ, ຫລືຄວາມເຊື່ອທີ່ຊອບທຳ ຫລື ຫລັກທຳຂອງເຂົາ.

ເລືອດທີ່ ຊອບ ທຳຂອງອາເບັນ ແລະ ຊາຂາຣີຢາ ຈະເປັນພະຍານຕໍ່ຕ້ານຄົນຊົ່ວ, **ມທ** 23:35 (ລກ 11:50). ຜູ້ໃດທີ່ສະລະຊີວິດຂອງຕົນເພື່ອເຫັນແກ່ເຮົາ ແລະ ແກ່ຂ່າວປະເສີດ ຜູ້ນັ້ນກໍຈະຖືກຊ່ວຍຊີວິດໃຫ້ພົ້ນໄດ້, **ມຣກ** 8:35 (ຄພ 98:13). ພວກເຂົາໄດ້ແກວ່ງກ້ອນຫີນໃສ່ຊະເຕຟາໂນ, **ກຈກ** 7:59 (ກຈກ 22:20). ໃນກໍລະນີທີ່ກ່ຽວກັບໜັງສືພິໄນກຳ ກໍຈະຕ້ອງພິສູດວ່າຜູ້ເຮັດໜັງສືນັ້ນຕາຍແລ້ວ, **ຮຣ** 9:16–17.

ອະບີນາໄດໄດ້ລົ້ມລົງ, ຮັບຄວາມຕາຍດ້ວຍໄຟ, **ມຊຢ** 17:20. ຊາວອຳໂມນໄນຮາທີ່ປ່ຽນໃຈເຫລື້ອມໃສ ໄດ້ຖືກໂຍນເຂົ້າກອງໄຟ, **ແອວ** 14:8–11. ຫລາຍຄົນໄດ້ຖືກຂ້າຕາຍ ເພາະພວກເພິ່ນໄດ້ໃຫ້ຖ້ອຍຄຳກ່ຽວກັບເລື່ອງເຫລົ່ານີ້, **3 ນຟ** 10:15.

ຜູ້ໃດກໍຕາມທີ່ວາງຊີວິດຂອງເຂົາໃນອຸດົມການຂອງເຮົາ ຈະພົບຊີວິດນິລັນດອນ, **ຄພ** 98:13–14. ໂຈເຊັບ ສະມິດ ແລະ ໄຮຣຳ ສະມິດ ໄດ້ຖືກຂ້າເພາະການຟື້ນຟູພຣະກິດຕິຄຸນຄືນມາໃໝ່, **ຄພ** 135. ໂຈເຊັບ ສະມິດ ໄດ້ຜະນຶກປະຈັກພະຍານຂອງເພິ່ນໄວ້ດ້ວຍເລືອດຂອງເພິ່ນ, **ຄພ** 136:39.

**ຕາລັນຕົນ**

ການວັດແທກນ້ຳໜັກໃນສະໄໝບູຮານ ຫລືຈຳນວນເງິນທີ່ມີຄ່າຫລວງຫລາຍ. ມັນຍັງຖືກໃຊ້ເປັນສັນຍາລັກສຳລັບບາງສິ່ງທີ່ມີຄ່າຫລວງຫລາຍຄືກັນ, ດັ່ງເຊັ່ນພຣະກິດຕິຄຸນຂອງພຣະເຢຊູຄຣິດ (ມທ 25:14–29; ອທ 12:35; ຄພ 60:2, 13).

**ຕີສອນ, ການຕີສອນ.** *ເບິ່ງ* ຍາກລຳບາກ, ຄວາມຍາກລຳບາກ *ນຳອີກ*

ການດັດແປງ ຫລື ການໃສ່ວິໄນທີ່ໄດ້ມອບໃຫ້ແກ່ບຸກຄົນ ຫລື ກຸ່ມຜູ້ຄົນເພື່ອຊ່ວຍເຫລືອເຂົາເຈົ້າພັດທະນາ ຫລື ເຂັ້ມແຂງຂຶ້ນ.

ຢ່າ ໂກດ ເຄືອງ ໃຈ ເມື່ອຜູ້ຊົງລິດອຳນາດຍິ່ງໃຫຍ່ຕີສອນ, **ໂຢບ** 5:17 (ສພສ 3:11). ຄວາມສຸກເປັນຂອງຜູ້ທີ່ພຣະອົງຕີສອນ, **ພສສ** 94:12.

ພຣະຄຳພີທຸກຕອນໄດ້ຖືກມອບໃຫ້ເພື່ອຕີສອນ, ເພື່ອກ່າວຕັກເຕືອນວ່າກ່າວ, **2 ຕມທ** 3:16. ພຣະຜູ້ເປັນເຈົ້າຕີສອນຜູ້ທີ່ພຣະອົງຮັກ, **ຮຣ** 12:5–11.

ພຣະຜູ້ເປັນເຈົ້າເຫັນສົມຄວນທີ່ຈະຕີສອນຜູ້ຄົນຂອງພຣະອົງ, **ມຊຢ** 23:21–22. ຖ້າຫາກພຣະຜູ້ເປັນເຈົ້າບໍ່ຕີສອນຜູ້ຄົນຂອງພຣະອົງ, ພວກເຂົາຈະບໍ່ລະນຶກເຖິງພຣະອົງເລີຍ, **ຮລມ** 12:3. ພຣະຜູ້ເປັນເຈົ້າໄດ້ກ່າວກັບນ້ອງຊາຍຂອງຢາເຣັດ, ແລະ ຕີສອນລາວ, **ອທ** 2:14.

ເຂົາໄດ້ຖືກຕີສອນ, ເພື່ອວ່າເຂົາຈະໄດ້ກັບໃຈ, **ຄພ** 1:27. ຜູ້ທີ່ເຮົາຮັກ ເຮົາຈະຕີສອນດ້ວຍເພື່ອວ່າບາບຂອງພວກເຂົາຈະໄດ້ຮັບການອະໄພ, **ຄພ** 95:1. ທຸກຄົນທີ່ບໍ່ອົດທົນຕໍ່ການຕີສອນ ຈະບໍ່ສາມາດຖືກຊຳລະໃຫ້ບໍລິສຸດໄດ້, **ຄພ** 101:2–5. ຜູ້ຄົນຂອງເຮົາຕ້ອງຖືກຕີສອນຈົນກວ່າພວກເຂົາໄດ້ຮຽນຮູ້ການເຊື່ອຟັງ, **ຄພ** 105:6. ຄົນໃດທີ່ບໍ່ອົດທົນກັບການຕີສອນ ຄົນໆນັ້ນກໍບໍ່ມີຄ່າຄວນພໍສຳລັບອານາຈັກຂອງເຮົາ, **ຄພ** 136:31.

**ຕີໂຕ.** *ເບິ່ງ* ສານຂອງໂປໂລ; ຕີໂຕ, ສານເຖິງ; ໂປໂລ *ນຳອີກ*

ໃນພຣະຄຳພີໃໝ່, ຜູ້ປ່ຽນໃຈເຫລື້ອມໃສຊາວກຣີກຄົນໜຶ່ງ ຜູ້ໄດ້ເດີນທາງໄປເຢຣູຊາເລັມກັບໂປໂລ ແລະ ຕໍ່ມາໄດ້ກາຍເປັນຜູ້ສອນສາດສະໜາ (ຄລຕ 2:1–4; 2 ຕມທ 4:10). ຕີໂຕໄດ້ເອົາສານສະບັບທຳອິດຂອງໂປໂລ ໄປໃຫ້ໄພ່ພົນຂອງພຣະເຈົ້າ ທີ່ເມືອງໂກຣິນໂທ (2 ກຣທ 7:5–8, 13–15).

**ຕີໂຕ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ຕີໂຕ; ໂປໂລ *ນຳອີກ*

ລະຫວ່າງ ທີ່ ໂປໂລ ໄດ້ ຖືກ ປ່ອຍ ອອກ ຈາກ ຄຸກ ຂອງ ຊາວ ໂຣມ, ລາວ ໄດ້ ຂຽນ ສານ ເຖິງ ຕີໂຕ, ຜູ້ຢູ່ ກະເຣເຕ. ສ່ວນຫລາຍແລ້ວ ຈົດໝາຍສະບັບນັ້ນໄດ້ບັນຈຸຄຳຖາມ ທີ່ກ່ຽວກັບວິໄນພາຍໃນ ແລະ ການຈັດຕັ້ງຂອງສາດສະໜາຈັກ.

ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລ ພ້ອມທັງຄຳແນະນຳທົ່ວໄປ ແລະ ຄຸນສົມບັດຂອງຜູ້ເປັນອະທິການ. ບົດທີ 2–3 ບັນຈຸຄຳສອນທົ່ວໄປ ແລະ ຂ່າວສານສ່ວນຕົວເຖິງຕີໂຕ ກ່ຽວກັບການປະຕິບັດຕໍ່ກຸ່ມຕ່າງໆ ໃນສາດສະໜາຈັກຂອງຊາວກະເຣເຕ. ໂປໂລໄດ້ຊຸກຍູ້ໄພ່ພົນຂອງພຣະເຈົ້າໃຫ້ເອົາຊະນະ ຄວາມເສື່ອມຊາມ, ໃຫ້ມີຄວາມເອົາໃຈໃສ່ ແລະ ຊື່ສັດ, ແລະ ຮັກສາວຽກງານດີເອົາໄວ້.

**ຕີໂມທຽວ.** *ເບິ່ງ* ໂປໂລ *ນຳອີກ*

ໃນພຣະຄຳພີໃໝ່, ຜູ້ສອນສາດສະໜາໜຸ່ມຄົນໜຶ່ງທີ່ເປັນຄູ່ຂອງໂປໂລ ລະຫວ່າງການປະຕິບັດສາດສະໜາກິດຂອງໂປໂລ (ກຈກ 16:1–3; 2 ຕມທ 1:1–5); ພໍ່ຂອງລາວເປັນຄົນກຣີກ ແລະ ແມ່ເປັນຄົນຢິວ; ລາວກັບພໍ່ແມ່ຂອງລາວໄດ້ອາໄສຢູ່ ເມືອງລີສະຕຣາ.

ໂປໂລໄດ້ກ່າວເຖິງຕີໂມທຽວວ່າເປັນ "ລູກຊາຍຂອງຕົນເອງໃນສັດທາ" (1 ຕມທ 1:2, 18; 2 ຕມທ 1:2). ຕີໂມທຽວອາດເປັນຜູ້ທີ່ໂປໂລໄວ້ວາງໃຈຫລາຍທີ່ສຸດ ແລະ ເປັນຜູ້ຊ່ວຍທີ່ມີຄວາມສາມາດຫລາຍ (ຟລປ 2:19–23).

**ຕີໂມທຽວ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ຕີໂມທຽວ; ໂປໂລ *ນຳອີກ*

ໜັງ ສື ສອງ ເຫລັ້ມ ໃນ ພຣະ ຄຳພີ ໃໝ່. ມັນເປັນໜັງສືສະບັບຕົ້ນທີ່ໂປໂລໄດ້ຂຽນເຖິງຕີໂມທຽວ.

*ຕີ ໂມ ທຽວ ສະບັບ ທຳ ອິດ:* ໂປໂລ ໄດ້ ຂຽນສານສະບັບທຳອິດ ຫລັງຈາກລາວໄດ້ຕິດຄຸກເທື່ອທຳອິດ. ລາວໄດ້ປະຕີໂມທຽວໄວ້ເມືອງເອເຟໂຊ, ໂດຍທີ່ຕັ້ງໃຈຈະກັບຄືນມາ (1 ຕມທ 3:14). ເຖິງຢ່າງໃດກໍຕາມ, ໂປໂລໄດ້ຮູ້ສຶກວ່າ ລາວຈະໄປເຖິງຊ້າ, ສະນັ້ນລາວຈຶ່ງໄດ້ຂຽນເຖິງຕີໂມທຽວ, ບາງທີຈາກມາເກໂດເນຍ (1 ຕມທ 1:3), ເພື່ອແນະນຳຊຸກຍູ້ລາວໃນການບັນລຸພາລະກິດຂອງລາວ.

ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລ ແລະ ຄຳແນະນຳຂອງລາວນຳອີກ ກ່ຽວກັບການຄາດຄະເນທີ່ໂງ່ຈ້າ ຊຶ່ງແຊກຊຶມເຂົ້າມາໃນສາດສະໜາຈັກ. ບົດທີ 2–3 ໃຫ້ຄຳແນະນຳກ່ຽວກັບການນະມັດສະການໃນສາທາລະນະ ແລະ ກ່ຽວກັບລັກສະນະ ແລະ ການກະທຳຂອງຜູ້ປົກຄອງ. ບົດທີ 4–5 ບັນຈຸຄຳບັນລະຍາຍກ່ຽວກັບການປະຖິ້ມຄວາມເຊື່ອໃນຍຸກສຸດທ້າຍ ແລະ ແນະນຳຕີໂມທຽວກ່ຽວກັບວິທີປະຕິບັດສາດສະໜາກິດແກ່ຜູ້ທີ່ລາວນຳພາ. ບົດທີ 6 ເປັນຄຳແນະນຳເພື່ອພິສູດສັດທາ ແລະ ຫລີກເວັ້ນຈາກຄວາມຮັ່ງມີທາງໂລກ.

*ຕີໂມທຽວສະບັບທີສອງ:* ໂປໂລໄດ້ຂຽນຈົດໝາຍສະບັບທີສອງ ລະຫວ່າງທີ່ລາວໄດ້ເຂົ້າຄຸກເທື່ອທີສອງ, ບໍ່ດົນກ່ອນຖືກຂ້າຍ້ອນຄວາມເຊື່ອ. ມັນບັນຈຸຖ້ອຍຄຳສຸດທ້າຍຂອງອັກຄະສາວົກ ແລະ ສະແດງຄວາມກ້າຫານ ແລະ ຄວາມໄວ້ວາງໃຈ ຊຶ່ງໄດ້ເຮັດໃຫ້ລາວປະເຊີນກັບຄວາມຕາຍ.

ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລ ແລະ ຄຳສັ່ງຕໍ່ຕີໂມທຽວ. ບົດທີ 2–3 ໃຫ້ຄຳເຕືອນ ແລະ ຄຳແນະນຳຫລາຍຢ່າງ, ພ້ອມດ້ວຍຄຳທ້າທາຍ ທີ່ຈະປະເຊີນສິ່ງອັນຕະລາຍທີ່ຢູ່ຂ້າງໜ້າ. ບົດທີ 4 ເປັນຂ່າວສານເຖິງໝູ່ເພື່ອນຂອງໂປໂລ, ບັນຈຸຄຳແນະນຳກ່ຽວກັບວິທີທີ່ຈະຈັດການກັບການປະຖິ້ມຄວາມເຊື່ອ.

**ແຕກກະຈັດກະຈາຍ, ການແຕກກະຈັດກະຈາຍ.** *ເບິ່ງ* ອິດສະຣາເອນ—ການກະຈັດກະຈາຍຂອງຊາວອິດສະຣາເອນ

**ແຕ່ງງານ, ການແຕ່ງງານ.** *ເບິ່ງ* ຄອບຄົວ; ຢ່າຮ້າງ *ນຳອີກ*

ພັນທະສັນຍາ ຫລື ການສັນຍາທີ່ຖືກຕ້ອງຕາມກົດໝາຍລະຫວ່າງຊາຍຄົນໜຶ່ງ ແລະ ຍິງ

ຄົນໜຶ່ງ ທີ່ເຮັດໃຫ້ທັງສອງເປັນສາມີ ແລະ ພັນລະຍາ. ພຣະເຈົ້າ ໄດ້ ແຕ່ງຕັ້ງການ ແຕ່ງງານ (ຄພ 49:15).

ບໍ່ ເປັນການ ສົມຄວນທີ່ຜູ້ຊາຍຕ້ອງຢູ່ ໂດດດ່ຽວ, **ປຖກ** 2:18 (ມຊ 3:18). ຜູ້ຊາຍຈຶ່ງຈາກພໍ່ແມ່ ແລະ ໄປຕິດພັນຢູ່ກັບເມຍຂອງຕົນ ແລະ ເຂົາທັງສອງກໍກາຍເປັນໜຶ່ງ, **ປຖກ** 2:24 (ມທ 19:5; ອຣຣ 5:18).

ສິ່ງທີ່ພຣະເຈົ້າໃຫ້ເຂົ້າຮ່ວມກັນແລ້ວນັ້ນ ຢ່າໃຫ້ມະນຸດ ເຮັດ ໃຫ້ພາກ ຈາກກັນ, **ມທ** 19:6 (ມຣກ 10:9). ໃນຍຸກສຸດທ້າຍຈະມີບາງຄົນປະຖິ້ມຄວາມເຊື່ອ, ພວກເຂົາຫ້າມບໍ່ໃຫ້ເອົາກັນເປັນຜົວເມຍ, **1 ຕມທ** 4:1–3. ຈົ່ງໃຫ້ການແຕ່ງງານຂອງພວກເຈົ້າເປັນທີ່ຍົກຍ້ອງ, **ຮຣ** 13:4.

ພຣະຜູ້ເປັນ ເຈົ້າ ໄດ້ບັນຊາ ພວກລູກ ຊາຍຂອງລີໄຮໃຫ້ແຕ່ງງານກັບພວກລູກສາວຂອງອິດຊະມາເອນ, **1 ນຟ** 7:1, 5 (1 ນຟ 16:7–8).

ພຣະເຈົ້າໄດ້ສ້າງອາດາມ ແລະ ເອວາ ໃຫ້ເປັນຜົວເມຍກັນ, **ມຊ** 3:7, 18, 21–25.

*ພັນທະສັນຍາໃໝ່ ແລະ ເປັນນິດຂອງການແຕ່ງງານ:* ການແຕ່ງງານທີ່ປະຕິບັດພາຍໃຕ້ກົດແຫ່ງພຣະກິດຕິຄຸນ ແລະ ຖານະປະໂລຫິດທີ່ສັກສິດ ແມ່ນສຳລັບຊີວິດມະຕະ ແລະ ຊົ່ວນິລັນດອນ. ດັ່ງນັ້ນຊາຍ ແລະ ຍິງທີ່ມີຄ່າຄວນຈຶ່ງໄດ້ຜະນຶກເຂົ້າກັນຢູ່ໃນພຣະວິຫານ ໃນການແຕ່ງງານ ທີ່ຈະເປັນສາມີພັນລະຍາສືບຕໍ່ໄປຕະຫລອດຊົ່ວນິລັນດອນ.

ພຣະ ເຢຊູ ໄດ້ສອນກ່ຽວກັບກົດຂອງການແຕ່ງງານ, **ລກ** 20:27–36. ຢູ່ໃນພຣະຜູ້ເປັນເຈົ້າ ຜູ້ຍິງກໍຕ້ອງ ເພິ່ງຜູ້ຊາຍ ແລະ ຜູ້ຊາຍກໍຕ້ອງເພິ່ງຜູ້ຍິງ, **1 ກຣທ** 11:11. ຜົວເມຍຈົ່ງນັບຖືກັນເໝືອນເປັນຜູ້ຮ່ວມກັນຮັບພຣະຄຸນແຫ່ງຊີວິດ, **1 ປຕ** 3:7.

ສິ່ງໃດທີ່ເຈົ້າຈະຜະນຶກເທິງແຜ່ນດິນໂລກນີ້ ສິ່ງນັ້ນຈະຖືກຜະນຶກໃນສະຫວັນ, **ຮລມ** 10:7 (ມທ 16:19).

ກ່ອນຈະໄດ້ບັນລຸເຖິງລະດັບສູງສຸດຂອງອານາຈັກຊັ້ນສູງໄດ້, ມະນຸດຕ້ອງເຂົ້າສູ່ລະບຽບຂອງພັນທະສັນຍາໃໝ່ ແລະ ເປັນນິດຂອງການແຕ່ງງານ, **ຄພ** 131:1–4. ຖ້າຫາກຜູ້ຊາຍແຕ່ງເອົາເມຍບໍ່ແມ່ນໂດຍເຮົາ, ພັນທະສັນຍາ ແລະ ການແຕ່ງງານຂອງພວກເຂົາທັງສອງ ຈະບໍ່ມີຜົນເມື່ອພວກເຂົາຕາຍໄປ, **ຄພ** 132:15. ຖ້າຫາກຜູ້ຊາຍແຕ່ງເອົາເມຍໂດຍຄຳຂອງເຮົາ ແລະ ໂດຍພັນທະສັນຍາໃໝ່ ແລະ ເປັນນິດ, ແລະ ຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ, ມັນຈະເກີດຜົນເມື່ອພວກເຂົາອອກໄປຈາກໂລກ, **ຄພ** 132:19.

*ການແຕ່ງງານກັບຄົນຕ່າງສາດສະໜາ:* ການແຕ່ງງານລະຫວ່າງຊາຍ ແລະ ຍິງ ຜູ້ປະຕິບັດ ແລະ ນັບຖືສາດສະໜາທີ່ແຕກຕ່າງກັນ.

ເຈົ້າຈະບໍ່ຫາເມຍທີ່ການາອານນີ້ໃຫ້ລູກຊາຍຂອງຂ້ອຍ, **ປຖກ** 24:3. ຖ້າຢາໂຄບເອົາລູກສາວຂອງເຫັດມາເປັນເມຍ, ກໍໃຫ້ຂ້ອຍຕາຍເສຍດີກວ່າ, **ປຖກ** 27:46 (ປຖກ 28:1–2). ຊາວອິດສະຣາເອນຈະບໍ່ແຕ່ງງານກັບຊາວການາອານ, **ພບຍ** 7:3–4. ຊາວອິດສະຣາເອນໄດ້ແຕ່ງງານກັບຊາວການາອານ, ໄດ້ນະມັດສະການພຣະປອມ, ແລະ ໄດ້ຖືກສາບແຊ່ງ, **ຜປ** 3:1–8. ບັນດາພວກພັນລະຍາຂອງໂຊໂລໂມນ ໄດ້ເຮັດໃຫ້ເພິ່ນຫັນໜີໄປນະມັດສະການພຣະເຈົ້າປອມ, **1 ກສ** 11:1–6. ພວກເຮົາຈະບໍ່ໃຫ້ພວກລູກສາວຂອງພວກເຮົາແຕ່ງງານກັບຄົນໃນແຜ່ນດິນນີ້, ທັງບໍ່ເອົາພວກລູກສາວຂອງພວກເຂົາໃຫ້ມາເປັນເມຍຂອງພວກລູກຊາຍຂອງພວກເຮົາ, **ນມຢ** 10:30.

ຢ່າຜູກພັນກັບຄົນທີ່ບໍ່ເຊື່ອໃນຖານະທີ່ບໍ່ສະເໝີກັນ, **2 ກຣທ** 6:14.

ພຣະຜູ້ເປັນເຈົ້າໄດ້ເຮັດເຄື່ອງໝາຍໄວ້ໃນຕົວຂອງຊາວເລມັນ ເພື່ອວ່າຊາວນີໄຟຈະບໍ່ປະປົນ ແລະ ເຊື່ອໃນຮີດຄອງປະເພນີອັນບໍ່ຖືກຕ້ອງຂອງພວກເຂົາ, **ແອວ** 3:6–10.

ຖ້າຫາກຜູ້ຊາຍແຕ່ງເອົາເມຍບໍ່ແມ່ນໂດຍເຮົາ, ພັນທະສັນຍາ ແລະ ການແຕ່ງງານຂອງພວກເຂົາທັງສອງ ຈະບໍ່ມີຜົນເມື່ອພວກເຂົາຕາຍໄປ, **ຄພ** 132:15.

ບັນດາພວກລູກຊາຍຂອງມະນຸດໄດ້ເອົາພວກນາງມາເປັນເມຍ ແມ່ນແຕ່ຕາມທີ່ພວກເຂົາຈະເລືອກ, **ມຊ** 8:13–15.

*ການມີເມຍຫລາຍຄົນ:* ການແຕ່ງງານຂອງ

ຜູ້ ຊາຍ ກັບ ຜູ້ ຍິງ ຈຳນວນ ສອງ ຫລື ຫລາຍ ກວ່ານັ້ນໃນຕອນທີ່ມີຊີວິດຢູ່. ການແຕ່ງງານເອົາເມຍຄົນໜຶ່ງແມ່ນຖືກຕ້ອງຕາມກົດໝາຍຂອງມະນຸດ, ຍົກເວັ້ນແຕ່ພຣະຜູ້ເປັນເຈົ້າບັນຊາໂດຍການເປີດເຜີຍ (ຢຄ 2:27–30). ໂດຍການເປີດເຜີຍ, ການເອົາເມຍຫລາຍຄົນໄດ້ຖືກອະນຸຍາດໃນສະໄໝຂອງພຣະຄຳພີເດີມ ແລະ ໃນໄລຍະຕອນຕົ້ນຂອງສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່ ໂດຍການຊີ້ນຳຂອງສາດສະດາ ຜູ້ດຳລົງຂໍກະແຈຂອງຖານະປະໂລຫິດ (ຄພ 132:34–40, 45). ບໍ່ມີການປະຕິບັດກັນອີກຢູ່ໃນສາດສະໜາຈັກ (ຂປ 1); ທຸກວັນນີ້, ການມີເມຍຫລາຍກວ່າໜຶ່ງຄົນ ບໍ່ເໝາະສົມກັບການເປັນສະມາຊິກໃນສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.

ນາງ ຊາຣາຍ ໄດ້ມອບ ນາງຮາກາ ໃຫ້ ເປັນເມຍ ຂອງ ອັບຣາມ, **ປຖກ** 16:1–11. ຢາໂຄບໄດ້ຮັບເອົານາງເລອາ ແລະ ນາງຣາເຊັນ ພ້ອມດ້ວຍ ສາວ ໃຊ້ຂອງພວກນາງມາເປັນເມຍ, **ປຖກ** 29:21–28 (ປຖກ 30:4, 9, 26). ຖ້າຊາຍຄົນໃດເອົາເມຍຄົນທີສອງ ລາວຕ້ອງສືບຕໍ່ເບິ່ງແຍງເມຍຄົນທີໜຶ່ງດ້ານອາຫານ, ເຄື່ອງນຸ່ງຫົ່ມ, ແລະ ສິດທິຢູ່ໃນລະດັບເດີມ, **ອພຍ** 21:10. ດາວິດ ແລະ ເມຍສອງຄົນຂອງລາວໄດ້ຂຶ້ນໄປຫາເມືອງເຮັບໂຣນ, **2 ຊມອ** 2:1–2. ອັບຣາຮາມ, ອີຊາກ, ແລະ ຢາໂຄບ ໄດ້ເຮັດສິ່ງທີ່ເຂົາເຈົ້າຖືກບັນຊາໃຫ້ເຮັດ ຄືໃນການມີເມຍຫລາຍຄົນ, **ຄພ** 132:37. ດາວິດ ແລະ ໂຊໂລໂມນ ບໍ່ໄດ້ເຮັດບາບໃນສິ່ງໃດ ຍົກເວັ້ນແຕ່ສິ່ງທີ່ເຂົາເຈົ້າບໍ່ໄດ້ຮັບຈາກພຣະຜູ້ເປັນເຈົ້າ, **ຄພ** 132:38–39.

**ແຕ່ງຕັ້ງ, ການແຕ່ງຕັ້ງ.** *ເບິ່ງ* ສິດອຳນາດ; ຕຳແໜ່ງ, ເຈົ້າໜ້າທີ່; ຖານະປະໂລຫິດ; ມື, ການວາງ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ *ນຳອີກ*

ທີ່ຈະກຳນົດ ຫລື ມອບສິດອຳນາດ ຫລື ຕຳແໜ່ງ. ທີ່ຈະ ໃຊ້ສິດອຳນາດ ໃນ ສາດສະໜາຈັກຂອງພຣະຜູ້ເປັນເຈົ້າ, ບຸກຄົນຕ້ອງຖືກເອີ້ນຈາກພຣະເຈົ້າ, ໂດຍການທຳນາຍ, ແລະ ໂດຍການວາງມື ໂດຍຜູ້ທີ່ມີສິດອຳນາດ (ຫຼຊ 1:5). ເຖິງແມ່ນວ່າບຸກຄົນໄດ້ຮັບສິດອຳນາດໂດຍການແຕ່ງຕັ້ງ, ແຕ່ເຂົາຕ້ອງໃຊ້ມັນຕາມການຊີ້ນຳຂອງຜູ້ທີ່ດຳລົງຂໍກະແຈ ສຳລັບສິດອຳນາດນັ້ນໂດຍສະເພາະ.

ເຮົາໄດ້ເລືອກເອົາເຈົ້າໄວ້ ເພື່ອໃຫ້ເປັນສາດສະດາແກ່ປະຊາຊາດທັງຫລາຍ, **ຢມຢ** 1:5. ບໍ່ ແມ່ນ ເຈົ້າ ທັງຫລາຍ ໄດ້ ເລືອກ ເອົາ ເຮົາ, ແຕ່ ຝ່າຍ ເຮົາ ໄດ້ ເລືອກເອົາພວກເຈົ້າ, ແລະ ແຕ່ງຕັ້ງເຈົ້າທັງຫລາຍ, **ຢຮ** 15:16. ໂດຍ ໄດ້ ຮັບ ສິດ ອຳນາດ ຈາກ ພຣະ ເຈົ້າ, ແອວມາໄດ້ແຕ່ງຕັ້ງປະໂລຫິດ, **ມຊຢ** 18:18. ພວກຜູ້ຊາຍໄດ້ຖືກແຕ່ງຕັ້ງສູ່ຖານະປະໂລຫິດສູງ ດ້ວຍພິທີການອັນສັກສິດ, **ແອວ** 13:1–9. ພຣະເຢຊູໄດ້ເອີ້ນ ແລະ ແຕ່ງຕັ້ງສານຸສິດສິບສອງຄົນ, **3 ນຟ** 12:1. ຜູ້ເປັນແອວເດີແຕ່ງຕັ້ງປະໂລຫິດ ແລະ ຄູສອນໂດຍການວາງມື, **ມຣນ** 3. ຕ້ອງລໍຖ້າໄປຊົ່ວໄລຍະໜຶ່ງ, ເພາະເຈົ້າຍັງບໍ່ໄດ້ຖືກແຕ່ງຕັ້ງເທື່ອ, **ຄພ** 5:17. ໂຈເຊັບ ສະມິດໄດ້ຖືກແຕ່ງຕັ້ງເປັນອັກຄະສາວົກຂອງພຣະເຢຊູຄຣິດ, **ຄພ** 20:2 (ຄພ 27:12). ບໍ່ມີໃຜຈະໄດ້ຮັບການແຕ່ງຕັ້ງສູ່ຕຳແໜ່ງໃນສາດສະໜາຈັກ ປາດສະຈາກການອອກສຽງຂອງສາດສະໜາຈັກ, **ຄພ** 20:65. ມັນຈະບໍ່ຖືກມອບໃຫ້ແກ່ຄົນໃດເພື່ອໄປສັ່ງສອນພຣະກິດຕິຄຸນຂອງເຮົາ, ຍົກເວັ້ນແຕ່ເຂົາຈະໄດ້ຮັບການແຕ່ງຕັ້ງ ໂດຍຄົນໃດຄົນໜຶ່ງທີ່ມີສິດອຳນາດ, **ຄພ** 42:11. ພວກແອວເດີໄດ້ຖືກແຕ່ງຕັ້ງເພື່ອສັ່ງສອນພຣະກິດຕິຄຸນຂອງເຮົາ, **ຄພ** 50:13–18. ມັນເປັນໜ້າທີ່ຂອງອັກຄະສາວົກສິບສອງທີ່ຈະແຕ່ງຕັ້ງ ແລະ ວາງລະບຽບເຈົ້າໜ້າທີ່ອື່ນໆຂອງສາດສະໜາຈັກ, **ຄພ** 107:58. ຂ້າພະເຈົ້າຈຶ່ງໄດ້ສະແຫວງຫາພອນຂອງບັນພະບຸລຸດ, ແລະ ສິດທິຊຶ່ງຂ້າພະເຈົ້າຄວນຈະ ໄດ້ຮັບການແຕ່ງຕັ້ງ, **ອຣຮ** 1:2. ໂຈເຊັບສະມິດ ແລະ ອໍລິເວີ ຄາວເດີຣີ ໄດ້ແຕ່ງຕັ້ງກັນສູ່ຖານະປະໂລຫິດແຫ່ງອາໂຣນ, **ຈສ—ປ** 1:68–72.

**ແຕ່ງຕັ້ງເປັນທາງການ, ການແຕ່ງຕັ້ງເປັນທາງການ.** *ເບິ່ງ* ມື, ການວາງ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ *ນຳອີກ*

ການໄດ້ຖືກເລືອກ ແລະ ຖືກອຸທິດສຳລັບຈຸດປະສົງທີ່ສັກສິດ. ການມອບໝາຍນີ້ ແມ່ນສຳລັບການຮັບໃຊ້ໃດໜຶ່ງໂດຍສະເພາະ ພາຍໃນອົງການຂອງສາດສະໜາຈັກ ໂດຍການວາງມືຂອງບຸກຄົນທີ່ໄດ້ມີສິດອຳນາດທີ່ຖືກຕ້ອງ. ພຽງແຕ່ຄົນທີ່ຄວບຄຸມກຸ່ມຖານະປະໂລຫິດເທົ່ານັ້ນ ໄດ້ຮັບຂໍກະແຈ ຕອນເຂົາເຈົ້າຮັບເອົາການແຕ່ງຕັ້ງເປັນທາງການ. ຜູ້ຄົນທີ່ໄດ້ຮັບການແຕ່ງຕັ້ງເປັນທາງການສຳລັບຕຳແໜ່ງອື່ນໆ ທີ່ນອກເໜືອໄປກວ່າປະທານກຸ່ມຖານະປະໂລຫິດ ຈະໄດ້ຮັບພອນຂອງຖານະປະໂລຫິດ, ແຕ່ບໍ່ໄດ້ຮັບຂໍກະແຈ ພ້ອມດ້ວຍພອນນັ້ນ.

ຈົ່ງເລືອກເອົາບາຣະນາບາກັບໂຊໂລໄວ້ສຳລັບພາລະກິດ, **ກຈກ** 13:2–3.

ອະທິການ ຄົນອື່ນໆ ເພື່ອຈະຖືກແຕ່ງຕັ້ງເປັນທາງການ, **ຄພ** 68:14. ອະທິການ, ຜູ້ຕັດສິນທົ່ວໄປ, ຈະຖືກແຕ່ງຕັ້ງເປັນທາງການ ສູ່ການປະຕິບັດສາດສະໜາກິດນີ້, **ຄພ** 107:17, 74.

ມະນຸດຕ້ອງໄດ້ຮັບການເອີ້ນຈາກພຣະເຈົ້າ ໂດຍການພະຍາກອນ ແລະ ໂດຍການວາງມື, **ຫຼຊ** 1:5.

**ແຕ່ງຕັ້ງລ່ວງໜ້າ, ການແຕ່ງຕັ້ງລ່ວງໜ້າ.** *ເບິ່ງ* ຊີວິດກ່ອນເກີດ *ນຳອີກ*

ການແຕ່ງຕັ້ງລູກໆທາງວິນຍານຂອງພຣະເຈົ້າໄວ້ລ່ວງໜ້າກ່ອນມາສູ່ຄວາມເປັນມະຕະ ແມ່ນເພື່ອບັນລຸພາລະກິດບາງຢ່າງໃນຊ່ວງໄລຍະຊີວິດມະຕະຂອງເຂົາເຈົ້າ.

ພຣະເຈົ້າໄດ້ກຳນົດບ່ອນໃຫ້ປະຊາຊົນ, **ພບຍ** 32:8. ເຮົາເລືອກເຈົ້າໄວ້ກ່ອນເຮົາໄດ້ໃຫ້ຊີວິດແກ່ເຈົ້າ ເພື່ອໃຫ້ເປັນສາດສະດາ, **ຢມຢ** 1:5.

ພຣະເຈົ້າໄດ້ກຳນົດເວລາກ່ອນແຕ່ງຕັ້ງ, **ກຈກ** 17:26. ຄົນທັງຫລາຍທີ່ພຣະອົງໄດ້ສັງເກດຮູ້ລ່ວງໜ້າແລ້ວ, ພຣະອົງກໍໄດ້ກຳນົດໄວ້ກ່ອນ, **ຣມ** 8:28–30. ພຣະອົງໄດ້ເລືອກພວກເຮົາໄວ້ຕັ້ງແຕ່ກ່ອນການວາງຮາກຖານຂອງໂລກ, **ອຟຊ** 1:3–4. ພຣະອົງໄດ້ຖືກເລືອກໄວ້ກ່ອນວາງຮາກຖານສ້າງໂລກໃຫ້ເປັນພຣະຜູ້ໄຖ່, **1 ປຕ** 1:19–20 (ພນມ 13:8).

ເຂົາເຈົ້າໄດ້ຖືກເອີ້ນ ແລະ ຖືກຕຽມໄວ້ນັບຕັ້ງແຕ່ການວາງຮາກຖານຂອງໂລກ, **ແອວ** 13:1–9.

ຂ້າພະເຈົ້າໄດ້ສັງເກດເຫັນຜູ້ທີ່ສູງສັກ ແລະ ຍິ່ງໃຫຍ່ ຜູ້ໄດ້ຖືກເລືອກໄວ້ແຕ່ຕອນຕົ້ນ, **ຄພ** 138:55–56.

ບຸດທີ່ຮັກຂອງເຮົາໄດ້ຖືກເລືອກໄວ້ຕັ້ງແຕ່ຕົ້ນ, **ມຊ** 4:2. ອັບຣາຮາມໄດ້ຖືກເລືອກໄວ້ກ່ອນເພິ່ນມາເກີດ, **ອຣຮ** 3:23.

**ຕົ້ນໄມ້ແຫ່ງຊີວິດ.** *ເບິ່ງ* ເອເດນ *ນຳອີກ*

ຕົ້ນໄມ້ຕົ້ນໜຶ່ງໃນສວນເອເດນ ແລະ ທີ່ສຸຂະເສີມຂອງພຣະເຈົ້າ (ປຖກ 2:9; ພນມ 2:7). ໃນຄວາມຝັນຂອງລີໄຮ ຕົ້ນໄມ້ແຫ່ງຊີວິດເປັນຕົວແທນໃຫ້ແກ່ຄວາມຮັກຂອງພຣະເຈົ້າ ແລະ ຖືກກ່າວເຖິງວ່າ ເປັນຂອງປະທານອັນຍິ່ງໃຫຍ່ທີ່ສຸດໃນຂອງປະທານທັງໝົດຂອງພຣະເຈົ້າ (1 ນຟ 8; 11:21–22, 25; 15:36).

ທູດເຄຣຸບ ແລະ ດາບທີ່ລຸກເປັນແສງໄຟປ້ອງກັນທາງໄປຫາຕົ້ນໄມ້ແຫ່ງຊີວິດ, **ປຖກ** 3:24 (ແອວ 12:21–23; 42:2–6).

ໂຢຮັນໄດ້ເຫັນຕົ້ນໄມ້ແຫ່ງຊີວິດ, ແລະ ໃບຂອງມັນໃຊ້ສຳລັບປິ່ນປົວບັນດາປະຊາຊາດທັງຫລາຍໃຫ້ຫາຍດີ, **ພນມ** 22:2.

ລີໄຮໄດ້ເຫັນຕົ້ນໄມ້ແຫ່ງຊີວິດ, **1 ນຟ** 8:10–35. ນີໄຟໄດ້ເຫັນຕົ້ນໄມ້ທີ່ບິດາຂອງເພິ່ນໄດ້ເຫັນ, **1 ນຟ** 11:8–9. ຣາວເຫລັກນຳພາໄປຫາຕົ້ນໄມ້ແຫ່ງຊີວິດ, **1 ນຟ** 11:25 (1 ນຟ 15:22–24). ເຫວເລິກອັນເປັນຕາຢ້ານ ແຍກຄົນຊົ່ວອອກຈາກຕົ້ນໄມ້ແຫ່ງຊີວິດ, **1 ນຟ** 15:28, 36. ຈຳເປັນຕ້ອງມີການກົງກັນຂ້າມ ເຖິງວ່າໝາກໄມ້ທີ່ຕ້ອງຫ້າມຍັງກົງກັນຂ້າມກັບຕົ້ນໄມ້ແຫ່ງຊີວິດ, **2 ນຟ** 2:15. ຈົ່ງມາຫາພຣະຜູ້ເປັນເຈົ້າ ແລະ ຮັບໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ, **ແອວ** 5:34, 62. ຖ້າຫາກບິດາມານດາຄົນທຳ

ອີດຂອງພວກເຮົາໄດ້ກິນໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດອີກແລ້ວ, ທັງສອງກໍຈະທຸກທໍລະມານຕະຫລອດການ, **ແອວ** 12:26. ຖ້າຫາກພວກທ່ານບໍ່ບຳລຸງລ້ຽງພຣະຄຳ, ພວກທ່ານຈະເກັບໝາກຂອງຕົ້ນໄມ້ແຫ່ງຊີວິດບໍ່ໄດ້ເລີຍ, **ແອວ** 32:40.

ພຣະຜູ້ເປັນເຈົ້າໄດ້ປູກຕົ້ນໄມ້ແຫ່ງຊີວິດໄວ້ໃນກາງສວນ, **ມຊ** 3:9 (ອຣຣ 5:9). ພຣະເຈົ້າໄດ້ໃຫ້ອາດາມອອກໄປຈາກສວນເອເດນຢ້ານວ່າລາວຈະຮັບສ່ວນໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ ແລະ ມີຊີວິດຢູ່ຕະຫລອດການ, **ມຊ** 4:28–31.

**ຕົວະ.** *ເບິ່ງ* ຊື່ສັດ, ຄວາມຊື່ສັດ; ເວົ້າຈາບໍ່ດີ; ຫລອກລວງ, ການຫລອກລວງ, ຄວາມຫລອກລວງ *ບຳອີກ*

ການສື່ສານທີ່ມີມູນຖານເປັນຄວາມເທັດ ຫລື ບໍ່ມີຄວາມຈິງ ໃນຈຸດປະສົງທີ່ຈະຫລອກລວງ.

ຢ່າລັກ ຫລື ຕົ້ມ ຫລື ຕົວະ, **ລລວ** 19:11. ຂ້າພຣະອົງກຽດຊັງການຕົວະຕົ້ມທຸກປະການ, **ພສສ** 119:163. ຄົນເວົ້າຕົວະນັ້ນ ພຣະຜູ້ເປັນເຈົ້າກຽດຊັງໜັກ, **ສພສ** 12:22. ພວກເຂົາເປັນປະຊາຊົນຂອງເຮົາ ພວກເຂົາຈະບໍ່ຫລອກລວງເຮົາ, **ອຊຢ** 63:8.

ມານເປັນພໍ່ຂອງການຕົວະທັງສິ້ນ, **ຢຮ** 8:44 (2 ນຟ 2:18; ອທ 8:25; ມຊ 4:4). ເຈົ້າບໍ່ໄດ້ຕົວະຕໍ່ມະນຸດ ແຕ່ຕົວະຕໍ່ພຣະເຈົ້າ, **ກຈກ** 5:4 (ແອວ 12:3). ຖ້າຜູ້ໃດເວົ້າວ່າ, ຂ້າພະເຈົ້າຮັກພຣະເຈົ້າ ແຕ່ຍັງກຽດຊັງພີ່ນ້ອງຂອງຕົນຢູ່, ຜູ້ນັ້ນກໍເປັນຄົນຂີ້ຕົວະ, **1 ຢຮ** 4:20. ຄົນຂີ້ຕົວະທຸກຄົນ ມີພາກສ່ວນຢູ່ໃນຄວາມຕາຍຄັ້ງທີສອງ, **ພນມ** 21:8 (ຄພ 63:17).

ວິບັດແກ່ຄົນຂີ້ຕົວະ, ເພາະເຂົາຈະຖືກໂຍນລົງນະລົກ, **2 ນຟ** 9:34. ຫລາຍຄົນຈະສອນຄຳສອນທີ່ຜິດ, ໂດຍກ່າວວ່າ: ຈົ່ງຕົວະໜ້ອຍໜຶ່ງ ແລະ ບໍ່ມີອັນຕະລາຍແນວໃດ ໃນການເຮັດສິ່ງນີ້, **2 ນຟ** 28:8–9 (ຄພ 10:25). ພວກທ່ານຄິດເອງໄດ້ບໍວ່າ ພວກທ່ານຈະເວົ້າຕົວະຕໍ່ພຣະເຈົ້າໄດ້, **ແອວ** 5:17. ພຣະອົງເປັນພຣະເຈົ້າແຫ່ງຄວາມຈິງ ແລະ ເວົ້າຕົວະບໍ່ໄດ້, **ອທ** 3:12 (ຈບຊ 23:19; 1 ຊມອ 15:29; ຕຕ 1:2; ຮຣ 6:18; ອນ 1:6).

ຄົນທີ່ຕົວະ ແລະ ບໍ່ກັບໃຈ ຈະຖືກຂັບໄລ່ອອກໄປ, **ຄພ** 42:21. ຄົນຂີ້ຕົວະຈະໄດ້ຮັບລັດສະໝີພາບຂອງຊັ້ນຕ່ຳເປັນມູນມໍລະດົກ, **ຄພ** 76:81, 103–106.

ພວກເຮົາເຊື່ອໃນການເປັນຄົນສັດຊື່, **ຫຼຊ** 1:13.

**ຕອນຕົ້ນ.** *ເບິ່ງ* ສ້າງ, ການສ້າງ; ຊີວິດກ່ອນເກີດ; ພຣະເຢຊູຄຣິດ *ບຳອີກ*

ໂດຍທົ່ວໄປແລ້ວ ແມ່ນກ່າວເຖິງເວລາກ່ອນຊີວິດມະຕະນີ້—ນັ້ນຄື, ຊີວິດກ່ອນມະຕະ. ບາງເທື່ອພຣະເຢຊູຄຣິດ ໄດ້ຖືກກ່າວເຖິງວ່າເປັນຕົ້ນ.

ໃນຕອນຕົ້ນພຣະເຈົ້າໄດ້ນິລະມິດສ້າງຟ້າສະຫວັນ, ແລະ ແຜ່ນດິນໂລກ, **ປຖກ** 1:1 (ມຊ 2:1).

ເມື່ອຕົ້ນເດີມນັ້ນ ພຣະທຳເປັນຢູ່ແລ້ວ, **ໂຢຮັນ** 1:1.

ເຮົາຄືອາລະຟາ ແລະ ໂອເມຄາ, ເປັນຕົ້ນ ແລະ ທີ່ສຸດ, **3 ນຟ** 9:18.

ພຣະຄຣິດເປັນຕົ້ນ ແລະ ທີ່ສຸດ, **ຄພ** 19:1. ພັນທະສັນຍາໃໝ່ ແລະ ເປັນນິດ, ແມ່ນເປັນມາຕັ້ງແຕ່ຕົ້ນ, **ຄພ** 22:1. ໃນຕອນຕົ້ນມະນຸດກໍໄດ້ຢູ່ກັບພຣະເຈົ້າ, **ຄພ** 93:23, 29. ວິນຍານທີ່ສູງສັກ ແລະ ຍິ່ງໃຫຍ່ ໄດ້ຖືກເລືອກໄວ້ແຕ່ຕອນຕົ້ນໃຫ້ເປັນຜູ້ປົກຄອງ, **ຄພ** 138:55.

ພຣະອົງດຽວທີ່ຖືກຳເນີດຂອງເຮົາໄດ້ຢູ່ກັບເຮົາຕັ້ງແຕ່ຕົ້ນ, **ມຊ** 2:26.

**ເຕືອນ, ຄຳເຕືອນ.** *ເບິ່ງ* ຍາມ, ຄົນຍາມ *ບຳອີກ*

ການແຈ້ງຄວາມ ຫລື ການເຕືອນ. ສາດສະດາ, ຜູ້ນຳ, ແລະ ພໍ່ແມ່ ເຕືອນ ແລະ ສອນຄົນອື່ນໆໃຫ້ເຊື່ອຟັງພຣະຜູ້ເປັນເຈົ້າ ແລະ ຄຳສອນຂອງພຣະອົງ.

ຢາໂຄບໄດ້ເຕືອນຜູ້ຄົນຂອງນີໄຟໃຫ້ຕໍ່ຕ້ານບາບທຸກຢ່າງ, **ຢຄ** 3:12.

ສຽງເຕືອນແມ່ນສຳລັບທຸກຜູ້ຄົນ, **ຄພ** 1:4. ຈົ່ງໃຫ້ການສັ່ງສອນຂອງພວກເຈົ້າເປັນສຽງເຕືອນ, **ຄພ** 38:41. ນີ້ຄືວັນແຫ່ງການເຕືອນ, **ຄພ** 63:58. ທຸກຄົນຜູ້ໄດ້ຖືກເຕືອນ ຄວນເຕືອນເພື່ອນບ້ານຂອງຕົນ, **ຄພ** 88:81. ເຮົາຈຶ່ງໄດ້ເຕືອນພວກເຈົ້າ, ແລະ ເຕືອນພວກເຈົ້າລ່ວງໜ້າ, ໂດຍໃຫ້ພຣະວາຈາແຫ່ງປັນຍາແກ່ພວກເຈົ້າ, **ຄພ** 89:4.

**ໄຕ່ຕອງ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ; ອະທິຖານ, ການອະທິຖານ, ຄຳອະທິຖານ *ນຳອີກ*

ທີ່ຈະນັ່ງສະມາທິ ແລະ ຄິດຄັກໆ, ສ່ວນຫລາຍແມ່ນກ່ຽວກັບຂໍ້ພຣະຄຳພີ ຫລື ສິ່ງອື່ນໆທີ່ເປັນຂອງພຣະເຈົ້າ. ເມື່ອຮ່ວມດ້ວຍການອະທິຖານ, ການໄຕ່ຕອງກ່ຽວກັບສິ່ງທີ່ເປັນຂອງພຣະເຈົ້າ ແລ້ວຈະໄດ້ຮັບການເປີດເຜີຍ ແລະ ຄວາມເຂົ້າໃຈ.

ມາຣີໄດ້ຄິດຮ່ຳເພິງຢູ່ໃນໃຈ, **ລກ** 2:19.

ໃນຂະນະທີ່ຂ້າພະເຈົ້ານັ່ງໄຕ່ຕອງຢູ່ໃນໃຈຢູ່ນັ້ນ, ຂ້າພະເຈົ້າກໍຖືກພາໄປ, **1 ນຟ** 11:1. ໃຈຂອງຂ້າພະເຈົ້າຄຳນຶງເຖິງຂໍ້ພຣະຄຳພີ, **2 ນຟ** 4:15. ນີໄຟເດີນທາງໄປ, ໄດ້ໄຕ່ຕອງເຖິງເລື່ອງຕ່າງໆທີ່ພຣະຜູ້ເປັນເຈົ້າໄດ້ສະແດງ, **ຮລມ** 10:2–3. ເຈົ້າຈົ່ງກັບໄປບ້ານຂອງເຈົ້າ ແລະ ໄຕ່ຕອງເຖິງເລື່ອງທີ່ເຮົາໄດ້ກ່າວໄປນັ້ນ, **3 ນຟ** 17:3. ໃຫ້ຈຳໄວ້ວ່າ ພຣະຜູ້ເປັນເຈົ້າເມດຕາຫລາຍພຽງໃດ, ແລະ ໄຕ່ຕອງເລື່ອງນີ້ຢູ່ໃນໃຈທ່ານ, **ມຣນ** 10:3.

ໄຕ່ຕອງເຖິງເລື່ອງທີ່ເຈົ້າໄດ້ຮັບ, **ຄພ** 30:3. ໃນຂະນະທີ່ພວກເຮົາຄິດໄຕ່ຕອງກ່ຽວກັບສິ່ງເຫລົ່ານີ້, ພຣະຜູ້ເປັນເຈົ້າໄດ້ສຳພັດຕາແຫ່ງຄວາມເຂົ້າໃຈຂອງພວກເຮົາ, **ຄພ** 76:19. ຂ້າພະເຈົ້າໄດ້ນັ່ງໄຕ່ຕອງຂໍ້ພຣະຄຳພີຢູ່ໃນຫ້ອງຂອງຂ້າພະເຈົ້າ, **ຄພ** 138:1–11.

ຂ້າພະເຈົ້າຄິດແລ້ວຄິດອີກ, **ຈສ—ປ** 1:12.

**ຕຳແໜ່ງ, ເຈົ້າໜ້າທີ່.** *ເບິ່ງ* ແຕ່ງຕັ້ງ, ການແຕ່ງຕັ້ງ; ຖານະປະໂລຫິດ *ນຳອີກ*

ຕຳແໜ່ງແຫ່ງສິດອຳນາດ ຫລື ໜ້າທີ່ຮັບຜິດຊອບໃນການຈັດຕັ້ງ, ສ່ວນຫລາຍຖືກໃຊ້ໃນພຣະຄຳພີ ເພື່ອໝາຍເຖິງຕຳແໜ່ງແຫ່ງສິດອຳນາດຂອງຖານະປະໂລຫິດ; ອາດໝາຍເຖິງໜ້າທີ່ມອບໝາຍຕໍ່ຕຳແໜ່ງນຳອີກ ຫລື ບຸກຄົນທີ່ດຳລົງຕຳແໜ່ງດັ່ງກ່າວ.

ສະມາຊິກທຸກຄົນບໍ່ມີຕຳແໜ່ງດຽວກັນ, **ຣມ** 12:4.

ພວກເຮົາໄດ້ກະທຳໜ້າທີ່ຂອງພວກເຮົາໃຫ້ຫລ້ອນແກ່ພຣະຜູ້ເປັນເຈົ້າ, **ຢຄ** 1:19. ເມນຄີເສເດັກໄດ້ຮັບໜ້າທີ່ຂອງຖານະປະໂລຫິດສູງ, **ແອວ** 13:18. ໜ້າທີ່ປະຕິບັດສາດສະໜາກິດຂອງເຫລົ່າທູດ ຄືຮຽກຮ້ອງມະນຸດມາສູ່ການກັບໃຈ, **ມຣນ** 7:31.

ບໍ່ມີໃຜຈະໄດ້ຮັບການແຕ່ງຕັ້ງສູ່ຕຳແໜ່ງໃນສາດສະໜາຈັກນີ້ ປາດສະຈາກການອອກສຽງຂອງໜ່ວຍສາດສະໜາຈັກນັ້ນ, **ຄພ** 20:65. ໃຫ້ທຸກຄົນຢືນຢູ່ໃນໜ້າທີ່ຂອງຕົນເອງ, **ຄພ** 84:109. ມີປະທານ, ຫລື ເຈົ້າໜ້າທີ່ຄວບຄຸມ, ຖືກກຳນົດຈາກຄົນເຫລົ່ານັ້ນທີ່ຖືກແຕ່ງຕັ້ງສູ່ຕຳແໜ່ງຕ່າງໆໃນຖານະປະໂລຫິດສອງຢ່າງນີ້, **ຄພ** 107:21. ໜ້າທີ່ຂອງຜູ້ທີ່ຄວບຄຸມຕຳແໜ່ງຕ່າງໆໃນກຸ່ມຖານະປະໂລຫິດ ໄດ້ຖືກບັນຍາຍໄວ້, **ຄພ** 107:85–98. ໃຫ້ທຸກໆຄົນຮຽນຮູ້ໜ້າທີ່ຂອງຕົນ, ແລະ ກະທຳໃນຕຳແໜ່ງທີ່ເຂົາຖືກກຳນົດໃຫ້, **ຄພ** 107:99–100. ເຮົາມອບເຈົ້າໜ້າທີ່ຊຶ່ງເປັນຂອງຖານະປະໂລຫິດຂອງເຮົາໃຫ້ແກ່ພວກເຈົ້າ, **ຄພ** 124:123.

**ຖານະປະໂລຫິດ.** *ເບິ່ງ* ຂໍກະແຈຂອງຖານະປະໂລຫິດ; ຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ; ສິດອຳນາດ; ແຕ່ງຕັ້ງ, ການແຕ່ງຕັ້ງ; ຖານະປະໂລຫິດແຫ່ງເມນຄີເສເດັກ; ຖານະປະໂລຫິດແຫ່ງອາໂຣນ; ອຳນາດ *ນຳອີກ*

ສິດອຳນາດ ແລະ ອຳນາດທີ່ພຣະເຈົ້າປະທານໃຫ້ມະນຸດ ທີ່ຈະກະທຳທຸກສິ່ງສຳລັບຄວາມລອດຂອງມະນຸດ (ຄພ 50:26–27). ສະມາຊິກຜູ້ຊາຍຂອງສາດສະໜາຈັກ ທີ່ດຳລົງຖານະປະໂລຫິດ ໄດ້ຖືກຈັດຕັ້ງໃຫ້ເປັນກຸ່ມ ແລະ ໄດ້ຮັບສິດອຳນາດໃຫ້ປະຕິບັດພິທີການ

ແລະ ບໍລິຫານງານບາງຢ່າງໂດຍສະເພາະໃນສາດສະໜາຈັກ.

ການເຈີມຂອງພວກເຂົາ ຈະເປັນຖານະປະໂລຫິດທີ່ເປັນນິດ, **ອພຍ** 40:15 (ຈບຊ 25:13). ເຮົາໄດ້ແຕ່ງຕັ້ງເຈົ້າ, **ຢຮ** 15:16. ເຈົ້າທັງຫລາຍເປັນວິຫານຝ່າຍວິນຍານ, ເປັນປະໂລຫິດບໍລິສຸດ, **1 ປຕ** 2:5. ພວກເຈົ້າເປັນຊາດທີ່ຖືກເລືອກໄວ້, ເປັນປະໂລຫິດຫລວງ, **1 ປຕ** 2:9 (ອພຍ 19:6).

ພວກຜູ້ຊາຍຖືກເອີ້ນໃຫ້ເປັນມະຫາປະໂລຫິດຍ້ອນສັດທາອັນຍິ່ງໃຫຍ່ ແລະ ວຽກງານດີຂອງເຂົາເຈົ້າ, **ແອວ** 13:1–12. ເຮົາມອບອຳນາດແກ່ເຈົ້າເພື່ອໃຫ້ບັບຕິສະມາ, **3 ນຟ** 11:21. ເຈົ້າຈະມີອຳນາດທີ່ຈະມອບພຣະວິນຍານບໍລິສຸດ, **ມຣນ** 2:2.

ເຮົາຈະເປີດເຜີຍຖານະປະໂລຫິດແກ່ເຈົ້າ, ໂດຍມືຂອງເອລີຢາ, **ຄພ** 2:1 (ຈສ—ປ 1:38). ພຣະຜູ້ເປັນເຈົ້າໄດ້ຢືນຢັນຖານະປະໂລຫິດໃຫ້ແກ່ອາໂຣນນຳອີກ ແລະ ລູກຫລານຂອງເພິ່ນ, **ຄພ** 84:18. ຖານະປະໂລຫິດດັ່ງກ່າວທີ່ສູງກວ່າ ປະຕິບັດພຣະກິດຕິຄຸນ, **ຄພ** 84:19. ພຣະອົງຈຶ່ງໄດ້ເອົາໂມເຊໄປຈາກທ່າມກາງພວກເຂົາ, ແລະ ຖານະປະໂລຫິດສັກສິດ, **ຄພ** 84:25. ຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ ໄດ້ຖືກບັນຍາຍໄວ້, **ຄພ** 84:33–42. ຖານະປະໂລຫິດໄດ້ສືບຕໍ່ດຳລົງຢູ່ຜ່ານທາຍາດຂອງບັນພະບຸລຸດຂອງພວກເຈົ້າ, **ຄພ** 86:8. ໃນສາດສະໜາຈັກ, ມີຖານະປະໂລຫິດຢູ່ດ້ວຍກັນສອງຢ່າງ, **ຄພ** 107:1. ຖານະປະໂລຫິດທຳອິດ ເປັນຖານະປະໂລຫິດສັກສິດ, ຕາມລະບຽບຂອງພຣະບຸດຂອງພຣະເຈົ້າ, **ຄພ** 107:2–4. ສິດຂອງຖານະປະໂລຫິດກ່ຽວຂ້ອງກັບອຳນາດແຫ່ງສະຫວັນຢ່າງແຍກກັນບໍ່ໄດ້, **ຄພ** 121:36. ບໍ່ມີອຳນາດ ຫລື ອິດທິພົນໃດສາມາດ ຫລື ຈະດຳລົງຮັກສາໄວ້ໄດ້ໂດຍອາໄສຖານະປະໂລຫິດ, ນອກຈາກໂດຍການຊັກຊວນ ແລະ ໂດຍຄວາມຮັກອັນບໍ່ແກ້ງເຮັດ, **ຄພ** 121:41. ສະມາຊິກຜູ້ຊາຍທີ່ຊື່ສັດ, ຜູ້ມີຄຸນຄ່າທຸກຄົນໃນສາດສະໜາຈັກ ຈະໄດ້ຮັບຖານະປະໂລຫິດ, **ຂປ** 2.

ພວກເຮົາເຊື່ອວ່າ ມະນຸດຕ້ອງໄດ້ຖືກເອີ້ນຈາກພຣະເຈົ້າ, **ຫຼຊ** 1:5.

**ຖານະປະໂລຫິດ, ຂໍກະແຈຂອງ.** *ເບິ່ງ* ຂໍກະແຈຂອງຖານະປະໂລຫິດ

**ຖານະປະໂລຫິດສູງ.** *ເບິ່ງ* ຖານະປະໂລຫິດແຫ່ງເມນຄີເສເດັກ

**ຖານະປະໂລຫິດແຫ່ງເມນຄີເສເດັກ.** *ເບິ່ງ* ຖານະປະໂລຫິດ; ເມນຄີເສເດັກ; ແອວເດີ *ນຳອີກ*

ຖານະປະໂລຫິດແຫ່ງເມນຄີເສເດັກ ເປັນຖານະປະໂລຫິດທີ່ສູງກວ່າ ຫລື ຍິ່ງໃຫຍ່ກວ່າ; ຖານະປະໂລຫິດແຫ່ງອາໂຣນ ເປັນຖານະປະໂລຫິດທີ່ຕ່ຳກວ່າ. ຖານະປະໂລຫິດແຫ່ງເມນຄີເສເດັກປະກອບດ້ວຍຂໍກະແຈ ແຫ່ງພອນທາງວິນຍານຂອງສາດສະໜາຈັກ. ຜ່ານພິທີການຕ່າງໆຂອງຖານະປະໂລຫິດທີ່ສູງກວ່າ, ອຳນາດຂອງຄວາມເປັນເໝືອນພຣະເຈົ້າໄດ້ຖືກສະແດງໃຫ້ປະຈັກແກ່ມະນຸດ (ຄພ 84:18–25; 107:18–21).

ທຳອິດ ພຣະເຈົ້າໄດ້ເປີດເຜີຍຖານະປະໂລຫິດທີ່ສູງກວ່ານີ້ແກ່ອາດາມ. ປິຕຸ ແລະ ສາດສະດາ ໃນທຸກຍຸກ ທຸກສະໄໝມີສິດອຳນາດນີ້ (ຄພ 84:6–17). ຕອນທຳອິດ ມັນຖືກເອີ້ນວ່າ ຖານະປະໂລຫິດທີ່ສັກສິດ, ຕາມລະບຽບຂອງພຣະບຸດຂອງພຣະເຈົ້າ. ຕໍ່ມາມັນຖືກຮູ້ຈັກກັນວ່າ ຖານະປະໂລຫິດແຫ່ງເມນຄີເສເດັກ (ຄພ 107:2–4).

ເມື່ອ ລູກຫລານຂອງອິດສະຣາເອນບໍ່ໄດ້ດຳລົງຊີວິດຕາມສິດທິພິເສດ ແລະ ພັນທະສັນຍາ ຂອງຖານະປະໂລຫິດແຫ່ງເມນຄີເສເດັກ, ພຣະຜູ້ເປັນເຈົ້າໄດ້ເອົາກົດທີ່ສູງກວ່າໄປຈາກພວກເຂົາ ແລະ ໄດ້ປະທານຖານະປະໂລຫິດ ແລະ ກົດທີ່ຕ່ຳກວ່າໃຫ້ແກ່ພວກເຂົາ (ຄພ 84:23–26). ທັງສອງເອີ້ນວ່າ ຖານະປະໂລຫິດແຫ່ງອາໂຣນ ແລະ ກົດຂອງໂມເຊ. ເມື່ອພຣະເຢຊູໄດ້ມາສູ່ໂລກ, ພຣະອົງໄດ້ນຳຖານະປະໂລຫິດແຫ່ງເມນຄີເສເດັກຄືນມາໃຫ້ຊາວຢິວ ແລະ ເລີ່ມຕົ້ນສ້າງຕັ້ງສາດສະໜາຈັກໃນບັນດາພວກເຂົາ. ເຖິງຢ່າງໃດກໍຕາມ, ຖານະປະ

ໂລຫິດ ແລະ ສາດສະໜາຈັກ ໄດ້ສູນເສຍໄປອີກ ເພາະການປະ ຖິ້ມຄວາມເຊື່ອ. ຕໍ່ມາ ມັນໄດ້ຖືກຟື້ນຟູຄືນມາໃໝ່ຜ່ານ ໂຈເຊັບ ສະມິດ, ຜູ້ລູກ (ຄພ 27 : 12–1 3; 12 8:20 ; ຈສ—ປ 1:73).

ພາຍໃນຖານະປະໂລຫິດແຫ່ງເມນຄີເສເດັກນັ້ນມີ ຕຳແໜ່ງຂອງ ແອວເດີ, ມະຫາປະໂລຫິດ, ປິຕຸ, ສາວົກ ເຈັດສິບ, ແລະ ອັກຄະສາວົກ (ຄພ 107). ຖານະປະໂລຫິດແຫ່ງເມນຄີເສເດັກ ຈະເປັນພາກສ່ວນໜຶ່ງຂອງອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກສະເໝີໄປ.

ປະທານຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ ເປັນປະທານຂອງຖານະປະໂລຫິດທີ່ສູງກວ່າ ຫລື ຖານະປະໂລຫິດແຫ່ງເມນຄີເສເດັກ, ແລະ ເພິ່ນມີຂໍກະແຈທັງໝົດທີ່ກ່ຽວຂ້ອງກັບອານາຈັກ ຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ຕຳແໜ່ງຂອງປະທານ ແມ່ນສຳລັບຄົນດຽວເທົ່ານັ້ນ, ແລະ ເພິ່ນເປັນພຽງຄົນດຽວຢູ່ໃນໂລກນີ້ ທີ່ໄດ້ຮັບສິດອຳນາດໃຫ້ໃຊ້ຂໍກະແຈທັງໝົດຂອງຖານະປະໂລຫິດ (ຄພ 107:64–67; 132:7).

ພຣະຄຣິດຈະເປັນປະໂລຫິດຕະຫລອດການຕາມລະບຽບຂອງເມນຄີເສເດັກ, **ພສສ** 110:4 (ຮຣ 5:6, 10; 7:11).

ຖານະປະໂລຫິດແຫ່ງເມນຄີເສເດັກປະຕິບັດພຣະກິດຕິຄຸນ, **ຮຣ** 7 (ຄພ 84:18–25).

ເມນຄີເສເດັກໄດ້ສະແດງສັດທາອັນແຮງກ້າ ແລະ ໄດ້ຮັບໜ້າທີ່ຂອງຖານະປະໂລຫິດສູງ, **ແອວ** 13:18.

ຖານະປະໂລຫິດແຫ່ງເມນຄີເສເດັກໄດ້ຖືກມອບໃຫ້ແກ່ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ, **ຄພ** 27:12–13 (ຈສ—ປ 1:72). ໄດ້ຮັບຖານະປະໂລຫິດໂດຍຄຳສາບານ ແລະ ພັນທະສັນຍາ, **ຄພ** 84:33–42. ມີສອງຝ່າຍ ຫລື ສອງໝວດໃຫຍ່, ຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ແຫ່ງອາໂຣນ, **ຄພ** 107:6. ຖານະປະໂລຫິດແຫ່ງເມນຄີເສເດັກຖືສິດທີ່ຈະປະຕິບັດໃນເລື່ອງທາງວິນຍານທັງໝົດ, **ຄພ** 107:8–18. ໂມເຊ, ອີລາຍ, ແລະ ເອລີຢາ ໄດ້ມອບຂໍກະແຈຂອງຖານະປະໂລຫິດໃຫ້ແກ່ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ, **ຄພ** 110:11–16. ບັດນີ້ເຮົາມອບເຈົ້າໜ້າທີ່ຊຶ່ງເປັນຂອງຖານະປະໂລຫິດຂອງເຮົາໃຫ້ແກ່ພວກເຈົ້າ, ເພື່ອວ່າພວກເຈົ້າຈະຖືຂໍກະແຈນັ້ນ, **ຄພ** 124:123.

**ຖານະປະໂລຫິດແຫ່ງເລວີ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ

**ຖານະປະໂລຫິດແຫ່ງອາໂຣນ.** *ເບິ່ງ* ກົດຂອງໂມເຊ; ຖານະປະໂລຫິດ; ອາໂຣນ, ອ້າຍຂອງໂມເຊ *ນຳອີກ*

ຖານະປະໂລຫິດທີ່ຕ່ຳກວ່າ (ຮຣ 7:11–12; ຄພ 107:13–14). ຕຳແໜ່ງຂອງຖານະປະໂລຫິດນີ້ຄື ອະທິການ, ປະໂລຫິດ, ຄູສອນ, ແລະ ມັກຄະນາຍົກ (ຄພ 84:30; 107:10, 14–15, 87–88). ໃນສະໄໝບູຮານ, ພາຍໃຕ້ກົດຂອງໂມເຊ, ມີມະຫາປະໂລຫິດ, ປະໂລຫິດ, ແລະ ຊາວເລວີ. ເພາະວ່າຊາວອິດສະຣາເອນໃນສະໄໝບູຮານໄດ້ກະບົດຕໍ່ພຣະເຈົ້າ, ໂມເຊ ແລະ ຖານະປະໂລຫິດທີ່ສັກສິດ ຈຶ່ງຖືກເອົາໄປຈາກເຂົາເຈົ້າ ແລະ ຖານະປະໂລຫິດທີ່ຕ່ຳກວ່າໄດ້ດຳລົງຢູ່ຕໍ່ໄປ. ເຂົາເຈົ້າໄດ້ປະຕິເສດຮັບການຊຳລະໃຫ້ບໍລິສຸດ ແລະ ຮັບເອົາຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ພິທີການຂອງມັນ (ຄພ 84:23–26). ຖານະປະໂລຫິດແຫ່ງອາໂຣນກ່ຽວພັນກັບພິທີການທາງໂລກ ແລະ ພາຍນອກຂອງກົດ ແລະ ພຣະກິດຕິຄຸນ (1 ຂຄ 23:27–32; ຄພ 84:26–27; 107:20). ມັນມີຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ, ຂອງພຣະກິດຕິຄຸນແຫ່ງການກັບໃຈ, ແລະ ຂອງການບັບຕິສະມາ (ຄພ 13). ຖານະປະໂລຫິດແຫ່ງອາໂຣນໄດ້ຖືກຟື້ນຟູຄືນສູ່ແຜ່ນດິນໂລກໃນຍຸກສະໄໝນີ້ ໃນວັນທີ 15 ເດືອນພຶດສະພາ ປີ 1829. ໂຢຮັນບັບຕິສະໂຕໄດ້ມອບມັນໃຫ້ແກ່ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ, ໃກ້ເມືອງຮາມໂມນີ, ລັດເພັນໄຊເວເນຍ (ຄພ 13; ຈສ—ປ 1:68–73).

ແລະ ລາວຈະມີພັນທະສັນຍາແຫ່ງຖານະ

ປະໂລຫິດອັນເປັນນິດ, **ຈບຊ** 25:13. ພຣະຜູ້ເປັນເຈົ້າ ຈະຊຳລະພວກລູກຊາຍຂອງເລວີ, ແລະ ເຮັດໃຫ້ພວກເຂົາບໍລິສຸດ, **ມລກ** 3:3 (3 ນຟ 24:3).

ບໍ່ທ່ອນມີຜູ້ໃດຕັ້ງຕົນເອງຢູ່ໃນຕຳແໜ່ງນີ້, **ຮຣ** 5:4. ຄວາມບໍລິບູນບໍ່ບັນລຸໄດ້ ທາງຖານະປະໂລຫິດແຫ່ງເລວີ, **ຮຣ** 7:11.

ຖານະປະໂລຫິດນີ້ຈະບໍ່ຖືກເອົາໄປຈາກແຜ່ນດິນໂລກອີກຈັກເທື່ອ, ຈົນກວ່າພວກບຸດຂອງເລວີຈະຖວາຍເຄື່ອງບູຊາ, **ຄພ** 13. ໂຈເຊັບ ສະມິດ ແລະ ອໍລິເວີ ຄາວເດີຣີ ໄດ້ຖືກແຕ່ງຕັ້ງສູ່ຖານະປະໂລຫິດແຫ່ງອາໂຣນ, **ຄພ** 27:8. ຖານະປະໂລຫິດທີ່ຕ່ຳກວ່າມີຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ, **ຄພ** 84:26 (ຄພ 13). ມີຖານະປະໂລຫິດຢູ່ດ້ວຍກັນສອງຢ່າງ, ນັ້ນຄື, ເມນຄີເສເດັກ ແລະ ອາໂຣນ, **ຄພ** 107:1. ຖານະປະໂລຫິດທີສອງຖືກເອີ້ນວ່າຖານະປະໂລຫິດແຫ່ງອາໂຣນ, **ຄພ** 107:13.

**ຖືກເລືອກ**

ຜູ້ທີ່ຖືກເລືອກຄືຜູ້ທີ່ຮັກພຣະເຈົ້າດ້ວຍສຸດຫົວໃຈ ແລະ ດຳລົງຊີວິດໃຫ້ເປັນທີ່ພໍພຣະໄທແກ່ພຣະອົງ. ຜູ້ທີ່ດຳລົງຊີວິດເຊັ່ນນັ້ນຂອງການເປັນອັກຄະສາວົກຈະຖືກເລືອກໂດຍພຣະຜູ້ເປັນເຈົ້າ ເພື່ອຈະໄດ້ຢູ່ໃນບັນດາລູກໆທີ່ເລືອກໄວ້ຂອງພຣະອົງໃນວັນໜຶ່ງ

ຖ້າເປັນໄປໄດ້, ພວກເຂົາຈະຫລອກລວງຜູ້ທີ່ຖືກເລືອກ, **ມທ** 24:24. ໂຢຮັນໄດ້ຊື່ນຊົມເພາະລູກຂອງສຸພາບສະຕີຜູ້ຖືກເລືອກເປັນຄົນຈິງຈັງ ແລະ ຊື່ສັດ, **2 ຢຮ** 1.

ບາບຂອງເຈົ້າໄດ້ຖືກອະໄພໃຫ້ແລ້ວ, ແລະເຈົ້າເປັນສະຕີຜູ້ຖືກເລືອກ, **ຄພ** 25:3. ຜູ້ທີ່ຖືກເລືອກໄດ້ຍິນສຽງເຮົາ ແລະ ບໍ່ເຮັດໃຈແຂງກະດ້າງ, **ຄພ** 29:7. ແມ່ນແຕ່ເຊັ່ນນັ້ນ ເຮົາຈະເຕົ້າໂຮມຜູ້ທີ່ຖືກເລືອກໄວ້ຂອງເຮົາຈາກສີ່ສ່ວນຂອງແຜ່ນດິນໂລກ, **ຄພ** 33:6. ພຣະຄຳພີຈະຖືກມອບໃຫ້ເພື່ອຄວາມລອດຂອງຜູ້ທີ່ເຮົາເລືອກໄວ້ເອງ, **ຄພ** 35:20–21. ຄົນທີ່ຂະຫຍາຍການເອີ້ນຂອງຖານະປະໂລຫິດກາຍເປັນຜູ້ທີ່ຖືກເລືອກໄວ້ຂອງພຣະເຈົ້າ, **ຄພ** 84:33–34.

ເພື່ອເຫັນແກ່ຜູ້ທີ່ຖືກເລືອກໄວ້, ວັນແຫ່ງຄວາມຍາກລຳບາກຈະສັ້ນລົງ, **ຈສ—ມ** 1:20.

**ຖືສິນອົດເຂົ້າ, ການຖືສິນອົດເຂົ້າ.** *ເບິ່ງ* ເຄື່ອງຖວາຍ; ຄວາມຜາສຸກ; ຍາກຈົນ; ໃຫ້ທານ, ການໃຫ້ທານ *ບຳອີກ*

ການບໍ່ກິນ ຫລື ດື່ມດ້ວຍຄວາມສະໝັກໃຈສຳລັບຈຸດປະສົງຂອງການທີ່ຈະເຂົ້າໃກ້ພຣະຜູ້ເປັນເຈົ້າ ແລະ ທູນຂໍພອນຈາກພຣະອົງ. ເມື່ອຄົນໃດຄົນໜຶ່ງ ຫລື ກຸ່ມໃດກຸ່ມໜຶ່ງຖືສິນອົດເຂົ້າ, ເຂົາເຈົ້າຄວນຈະອະທິຖານຂໍໃຫ້ຕົນເຂົ້າໃຈເຖິງພຣະປະສົງຂອງພຣະເຈົ້າ ແລະ ເພື່ອເພີ່ມຄວາມເຂັ້ມແຂງທາງວິນຍານນຳອີກ. ການຖືສິນອົດເຂົ້າໄດ້ຖືກກະທຳກັນມາຕະຫລອດໂດຍຜູ້ທີ່ເຊື່ອຢ່າງແທ້ຈິງ.

ສາດສະໜາຈັກທຸກວັນນີ້, ວັນຊະບາໂຕມື້ໜຶ່ງຂອງແຕ່ລະເດືອນ ໄດ້ຖືກຈັດໄວ້ເພື່ອຈຸດປະສົງຂອງການຖືສິນອົດເຂົ້າ. ໃນຊ່ວງໄລຍະເວລານີ້, ສະມາຊິກຂອງສາດສະໜາຈັກຈະບໍ່ກິນເຂົ້າ ແລະ ດື່ມນ້ຳ ເປັນເວລາຊາວສີ່ຊົ່ວໂມງ. ແລ້ວເຂົາເຈົ້າຈະບໍລິຈາກເງິນທີ່ເຂົາເຈົ້າໃຊ້ສຳລັບອາຫານໃນມື້ນັ້ນໃຫ້ສາດສະໜາຈັກ. ເງິນສ່ວນນີ້ເອີ້ນວ່າ ເງິນຖືສິນອົດເຂົ້າ. ສາດສະໜາຈັກໃຊ້ເງິນຖືສິນອົດເຂົ້າ ເພື່ອຊ່ວຍເຫລືອຄົນຍາກຈົນ ແລະ ຄົນຂັດສົນ.

ພວກເຮົາໄດ້ຖືສິນອົດເຂົ້າ ແລະ ໄດ້ສະແຫວງຫາພຣະເຈົ້າຂອງເຮົາ, **ອຊຣ** 8:21–23, 31. ຂ້າພະເຈົ້າບໍ່ກິນເຂົ້າ ແລະ ອ້ອນວອນຫາພຣະເຈົ້າຂອງສະຫວັນຊັ້ນຟ້າ, **ນມຢ** 1:4. ໃຫ້ພາກັນຖືສິນອົດເຂົ້າເພື່ອຂ້ອຍ, ແລະ ຢ່າກິນ ຫລື ດື່ມຫຍັງໃນສາມມື້, **ອສທ** 4:16. ຂ້າພຣະອົງຖ່ອມຕົວດ້ວຍການຖືສິນອົດເຂົ້າ, **ພສສ** 35:13. ສິ່ງນີ້ບໍ່ແມ່ນການຖືສິນອົດເຂົ້າທີ່ເຮົາໄດ້ເລືອກບໍ, **ອຊຢ** 58:3–12. ຂ້າພະເຈົ້າຕັ້ງໜ້າອ້ອນວອນຂໍຕໍ່ອົງພຣະຜູ້ເປັນເຈົ້າ, ຖືສິນອົດເຂົ້າ, **ດນອ** 9:3. ຈົ່ງກັບຄືນມາຫາເຮົາຢ່າງເຕັມໃຈດ້ວຍການອົດເຂົ້າ, **ຢອ** 2:12. ເມືອງນີເນເວໄດ້ເຊື່ອຟັງພຣະເຈົ້າ, ແລະ ໄດ້ອົດເຂົ້າ, **ຢນ** 3:5.

ພຣະເຢຊູໄດ້ອົດອາຫານສີ່ສິບມື້, **ມທ** 4:2

(ອພຍ 34:28; 1 ກສ 19:8; ລກ 4:1–2). ບໍ່ໃຫ້ຄົນອື່ນຮູ້ໄດ້ວ່າ ເຈົ້າກຳລັງຖືສິນອົດເຂົ້າ, **ມທ** 6:18 (3 ນຟ 13:16). ຜີແນວນີ້ບໍ່ເຄີຍຖືກຂັບອອກ ເວັ້ນແຕ່ດ້ວຍການອະທິຖານ ແລະ ຖືສິນອົດເຂົ້າ, **ມທ** 17:21.

ຖືສິນອົດເຂົ້າ ແລະ ອະທິຖານຕໍ່ໄປ, **ອມນ** 1:26 (4 ນຟ 1:12). ເຂົາເຈົ້າໄດ້ເລີ່ມຖືສິນອົດເຂົ້າ, ແລະ ອະທິຖານຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຂົາເຈົ້າ, **ມຊຢ** 27:22. ຂ້າພະເຈົ້າໄດ້ຖືສິນອົດເຂົ້າ ແລະ ອະທິຖານມາຫລາຍມື້ ເພື່ອຂ້າພະເຈົ້າຈະໄດ້ຮູ້ເລື່ອງເຫລົ່ານີ້, **ແອວ** 5:46. ລູກໆຂອງພຣະເຈົ້າໄດ້ເຂົ້າຮ່ວມກັນຖືສິນອົດເຂົ້າ ແລະ ອະທິຖານຢ່າງສຸດກຳລັງ, **ແອວ** 6:6. ພວກລູກຊາຍຂອງໂມໄຊຢາໄດ້ຍອມຕົນໃນການອະທິຖານ ແລະ ການຖືສິນອົດເຂົ້າ, **ແອວ** 17:3, 9. ເວລາແຫ່ງການຖືສິນອົດເຂົ້າ ແລະ ອະທິຖານໄດ້ເກີດຂຶ້ນຫລັງຈາກການຕາຍຂອງຊາວນີໄຟຫລາຍຄົນ, **ແອວ** 28:5–6. ພວກເຂົາໄດ້ຖືສິນອົດເຂົ້າ ແລະ ອະທິຖານຫລາຍທີ່ສຸດ, **ແອວ** 45:1 (ຮລມ 3:35).

ໃຫ້ອາຫານຂອງເຈົ້າຖືກຈັດຕຽມດ້ວຍໃຈທີ່ເຫັນແກ່ພຣະອົງເທົ່ານັ້ນ ເພື່ອວ່າການຖືສິນອົດເຂົ້າຂອງເຈົ້າຈະສົມບູນ, **ຄພ** 59:13–14. ພວກເຈົ້າຈະສືບຕໍ່ໃນການອະທິຖານ ແລະ ການຖືສິນອົດເຂົ້າ, **ຄພ** 88:76.

**ຖ່ອມຕົນ, ຄວາມຖ່ອມຕົນ.** *ເບິ່ງ* ຈອງຫອງ, ຄວາມຈອງຫອງ; ຍາກຈົນ; ຫົວໃຈທີ່ຊອກຊ້ຳ; ອ່ອນໂຍນ, ຄວາມອ່ອນໂຍນ; ອ່ອນແອ, ຄວາມອ່ອນແອ *ນຳອີກ*

ເພື່ອເຮັດໃຫ້ອ່ອນໂຍນ ແລະ ສອນງ່າຍ, ຫລື ສະພາບຂອງການເປັນຄົນອ່ອນໂຍນ ແລະ ສອນງ່າຍ. ຄວາມຖ່ອມຕົວແມ່ນຮ່ວມດ້ວຍການຮັບຮູ້ຂອງເຮົາທີ່ຕ້ອງເພິ່ງອາໄສພຣະເຈົ້າ ແລະ ຄວາມປາດຖະໜາທີ່ຈະເຮັດຕາມພຣະປະສົງຂອງພຣະອົງ.

ພຣະເຈົ້າໄດ້ນຳພາພວກເຈົ້າໃນການເດີນທາງຜ່ານຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີ, **ພບຍ** 8:2. ຂ້າພຣະອົງຖ່ອມຕົວດ້ວຍການຖືສິນອົດເຂົ້າ, **ພສສ** 35:13. ຄົນແກ່ ແລະ ຍັງໂງ່ຈ້າບໍ່ຍອມຟັງຄຳແນະນຳຢູ່ ລາວກໍສູ້ຄົນໜຸ່ມທີ່ຍາກຈົນແຕ່ສະຫລາດສະຫລຽວບໍ່ໄດ້, **ປຍຈ** 4:13. ພຣະຜູ້ເປັນເຈົ້າຢູ່ນຳຜູ້ທີ່ຖ່ອມໃຈ, **ອຊຢ** 57:15.

ຜູ້ເປັນໃຫຍ່ທີ່ສຸດໃນອານາຈັກສະຫວັນແມ່ນຜູ້ທີ່ຖ່ອມຕົວລົງເໝືອນດັ່ງເດັກນ້ອຍຜູ້ນີ້, **ມທ** 18:4. ຜູ້ໃດທີ່ຖ່ອມຕົວລົງຜູ້ນັ້ນຈະຖືກຍົກຂຶ້ນ, **ມທ** 23:12 (ລກ 14:11; 18:14). ພຣະເຢຊູໄດ້ຖ່ອມຕົວລົງ ແລະ ຍອມເຊື່ອຟັງຈົນເຖິງຄວາມມໍລະນາ, **ຟລປ** 2:8 (ລກ 22:42; 23:46). ພຣະເຈົ້າຕໍ່ສູ້ຄົນທີ່ອວດດີ, ແຕ່ປະທານພຣະຄຸນໃຫ້ແກ່ຜູ້ທີ່ຖ່ອມໃຈ, **1 ປຕ** 5:5–6 (2 ນຟ 9:42).

ຈົ່ງຖ່ອມຕົວຂອງພວກທ່ານເຖິງສ່ວນເລິກແຫ່ງຄວາມຖ່ອມຕົວ, **ມຊຢ** 4:11 (2 ນຟ 9:42; 3 ນຟ 12:2). ພວກທ່ານຖ່ອມຕົວພຽງພໍແລ້ວບໍ, **ແອວ** 5:27–28. ຜູ້ຄົນທີ່ຖ່ອມຕົວເປັນຈຳນວນຫລວງຫລາຍໄດ້ເຂັ້ມແຂງຂຶ້ນເລື້ອຍໆໃນຄວາມຖ່ອມຕົວຂອງພວກເຂົາ, **ຮລມ** 3:33–35. ເຮົາຈະມອບຄວາມອ່ອນແອໃຫ້ມະນຸດເພື່ອເຂົາຈະຖ່ອມຕົວ, **ອທ** 12:27.

ຄວາມຖ່ອມຕົວຄືເງື່ອນໄຂສຳລັບການບັບຕິສະມາ, **ຄພ** 20:37. ຈົ່ງຖ່ອມຕົວລົງຢູ່ຕໍ່ໜ້າເຮົາ ແລະ ພວກເຈົ້າຈະເຫັນເຮົາ ແລະ ຮູ້ວ່າເຮົາດຳລົງຢູ່, **ຄພ** 67:10. ຈົ່ງຖ່ອມຕົວ ແລະ ພຣະຜູ້ເປັນເຈົ້າຈະໃຫ້ຄຳຕອບແກ່ຄຳອະທິຖານຂອງເຈົ້າ, **ຄພ** 112:10. ໃຫ້ຄົນທີ່ໂງ່ຈ້າຮຽນຮູ້ປັນຍາໂດຍການຖ່ອມຕົວ, **ຄພ** 136:32. ວິນຍານຂອງເຮົາໄດ້ຖືກສົ່ງອອກໄປເພື່ອໃຫ້ຄວາມສະຫວ່າງແກ່ຄົນຖ່ອມຕົວ, **ຄພ** 136:33.

**ໄຖ່, ການໄຖ່, ຖືກໄຖ່.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ຄວາມຕາຍທາງວິນຍານ; ຄວາມຕາຍທາງຮ່າງກາຍ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ລອດ, ຄວາມລອດ *ນຳອີກ*

ເພື່ອປົດປ່ອຍ, ເພື່ອຈ່າຍຄ່າ, ຫລື ເພື່ອໄຖ່ຖອນ, ດັ່ງເຊັ່ນບຸກຄົນທີ່ເປັນອິດສະລະຈາກຄວາມເປັນທາດ ໂດຍການຈ່າຍທົດແທນ. ການໄຖ່ແມ່ນອ້າງເຖິງການຊົດໃຊ້ຂອງພຣະ

ເຢຊູ ຄຣິດ ແລະ ການ ປົດ ປ່ອຍ ຈາກ ບາບ. ການຊົດໃຊ້ຂອງພຣະເຢຊູໄດ້ໄຖ່ມະນຸດຊາດທັງປວງຈາກຄວາມຕາຍທາງຮ່າງກາຍ. ຜ່ານການ ຊົດ ໃຊ້ ຂອງ ພຣະ ອົງ, ຜູ້ທີ່ມີສັດທາ ໃນພຣະອົງ ແລະ ຜູ້ທີ່ກັບ ໃຈ ກໍ ຈະ ຖືກ ໄຖ່ ຈາກຄວາມຕາຍທາງວິນຍານນຳອີກ.

ເຮົາຜູ້ດຽວທີ່ຊ່ວຍເຈົ້າໄດ້, **ອຊຢ** 44:22. ເຮົາຈະຊ່ວຍກູ້ເອົາປະຊາຊົນນີ້ໃຫ້ພົ້ນຈາກຄວາມຕາຍ, **ຣສອ** 13:14 (ພສສ 49:15).

ພວກເຮົາໄດ້ຮັບການໄຖ່ໃຫ້ພົ້ນດ້ວຍໂລຫິດຂອງພຣະຄຣິດ, **ອຟຊ** 1:7, 14 (ຮຣ 9:11–15; 1 ປຕ 1:18–19; ແອວ 5:21; ຣລມ 5:9–12).

ພຣະຜູ້ເປັນເຈົ້າໄດ້ໄຖ່ຈິດວິນຍານຂອງພໍ່ຈາກນະລົກ, **2 ນຟ** 1:15. ການໄຖ່ຈຶ່ງມາເຖິງໂດຍຜ່ານທາງພຣະເມຊີອາຜູ້ບໍລິສຸດ, **2 ນຟ** 2:6–7, 26 (ມຊຢ 15:26–27; 26:26). ພວກເຂົາໄດ້ຮ້ອງສັນລະເສີນຄວາມຮັກທີ່ໄຖ່, **ແອວ** 5:9 (ແອວ 5:26; 26:13). ຄົນຊົ່ວຈຶ່ງຄົງຢູ່ເໝືອນກັບວ່າບໍ່ມີການໄຖ່ເກີດຂຶ້ນເລີຍ, **ແອວ** 11:40–41 (ແອວ 34:16; 42:13; ຣລມ 14:16–18). ພຣະເຢຊູຄຣິດໄດ້ນຳເອົາການໄຖ່ມາສູ່ໂລກ, **ມມ** 7:5–7. ອຳນາດແຫ່ງການໄຖ່ມາເຖິງເຂົາທຸກຄົນທີ່ບໍ່ມີກົດ, **ມຣນ** 8:22 (ຄພ 45:54).

ຄົນທີ່ບໍ່ເຊື່ອ ບໍ່ສາມາດໄດ້ຮັບການໄຖ່ຈາກການ ຕົກທາງ ວິນ ຍານ ຂອງ ພວກ ເຂົາ, **ຄພ** 29:44. ເດັກນ້ອຍໆໄດ້ຮັບການໄຖ່ນັບແຕ່ການວາງຮາກຖານຂອງໂລກ, **ຄພ** 29:46. ພຣະຜູ້ເປັນເຈົ້າໄດ້ໄຖ່ຜູ້ຄົນຂອງພຣະອົງ, **ຄພ** 84:99. ໂຈເຊັບ ແອັຟ ສະມິດ ໄດ້ເຫັນໃນພາບນິມິດກ່ຽວກັບຄົນຕາຍ, **ຄພ** 138.

ອາດາມ ແລະ ເອວາ ໄດ້ປິຕິຍິນດີໃນການໄຖ່ຂອງຕົນ, **ມຊ** 5:9–11.

**ທະເລແດງ.** *ເບິ່ງ* ໂມເຊ *ນຳອີກ*

ພືນນ້ຳ ລະຫວ່າງ ປະເທດ ເອຢິບ ແລະ ປະເທດອາຣາເບຍ. ອ່າວທັງສອງທີ່ຢູ່ທາງພາກເໜືອຂອງມັນ ປະກອບເປັນຝັ່ງທະເລແຈແຫລມຊີນາຍ. ພຣະຜູ້ເປັນເຈົ້າໄດ້ແຍກທະເລແດງອອກໄປສອງຢ່າງໜ້າມະຫັດສະຈັນ ເພື່ອວ່າຊາວອິດສະຣາເອນ ພາຍໃຕ້ການຊີ້ນຳຂອງໂມເຊ ຈະສາມາດຍ່າງຂ້າມມັນໄປ ເທິງແຜ່ນດິນແຫ້ງ (ອພຍ 14:13–31; ຮຣ 11:29). ການທີ່ໂມເຊໄດ້ແຍກທະເລອອກເປັນສອງໄດ້ຖືກຢືນຢັນໃນການເປີດເຜີຍຍຸກສຸດທ້າຍ (1 ນຟ 4:2; ຣລມ 8:11; ຄພ 8:3; ມຊ 1:25).

**ທະເລຕາຍ**

ທະເລເກືອຢູ່ພາກໃຕ້ສຸດຂອງທົ່ງຈໍແດນ. ມັນຍັງເປັນທີ່ຮູ້ຈັກກັນດີວ່າເປັນທະເລເກືອ. ຊັ້ນໜ້າຂອງມັນຕ່ຳກວ່າທະເລເມດີແຕຣາເນປະມານ 1300 ຟິດ (395 ແມັດ). ນະຄອນໂຊໂດມ, ນະຄອນໂກໂມຣາ, ແລະ ໂສອາ ຫລື ເບລາ ໄດ້ຕັ້ງຢູ່ແຄມທະເລນີ້ (ປຖກ 14:2–3).

ໃນການບັນລຸຄຳທຳນາຍ ແລະ ໃນການເປັນເຄື່ອງໝາຍຢ່າງໜຶ່ງເຖິງການສະເດັດມາຄັ້ງທີສອງຂອງພຣະຜູ້ຊ່ວຍໃຫ້ລອດ, ນ້ຳໃນທະເລຕາຍຈະຈືດ, ແລະ ຈະນຳຊີວິດໄປສູ່ທີ່ນັ້ນ (ອຊກ 47:8–9).

**ທາຍາດ**

ບຸກຄົນທີ່ມີສິດຈະໄດ້ຮັບຂອງປະທານທາງຮ່າງກາຍ ຫລື ວິນຍານ. ໃນພຣະຄຳພີ, ຄົນຊອບທຳໄດ້ຖືກສັນຍາວ່າ ເຂົາເຈົ້າຈະໄດ້ຮັບທຸກສິ່ງທຸກຢ່າງທີ່ພຣະເຈົ້າມີເປັນມູນມໍລະດົກ.

ອັບຣາຮາມຢາກມີຜູ້ສືບມໍລະດົກ, **ປຖກ** 15:2–5.

ໂລກນີ້ເປັນຂອງອັບຣາຮາມຍ້ອນສັດທາທີ່ຊອບທຳຂອງເພິ່ນ, **ຣມ** 4:13. ພວກເຮົາເປັນລູກຂອງພຣະເຈົ້າ, ແລະ ຖ້າເຮົາທັງຫລາຍເປັນລູກ, ແລ້ວເຮົາກໍເປັນຜູ້ຮັບມໍລະດົກຈາກພຣະເຈົ້າ, ແລະ ເປັນຜູ້ຮ່ວມຮັບມໍລະດົກກັບພຣະຄຣິດ, **ຣມ** 8:16–17 (ຄພ 84:38). ເຈົ້າເປັນບຸດ, ເປັນທາຍາດຂອງພຣະເຈົ້າຜ່ານພຣະຄຣິດ, **ຄລຕ** 4:7. ພຣະເຈົ້າໄດ້ຕັ້ງພຣະບຸດຂອງພຣະອົງໃຫ້ເປັນຜູ້ຮັບສັບພະທຸກສິ່ງທັງປວງເປັນມໍລະດົກ, **ຮຣ** 1:2.

ຜູ້ທີ່ລໍຖ້າການໄຖ່ບາບຂອງພວກເຂົາເປັນທາຍາດຂອງອານາຈັກຂອງພຣະເຈົ້າ, **ມຊຢ** 15:11. ຜູ້ຄົນໄດ້ກາຍເປັນລູກຂອງພຣະຄຣິດ ແລະ ທາຍາດຂອງອານາຈັກຂອງພຣະເຈົ້າ, **4 ນຟ** 1:17.

ຄົນທີ່ໄດ້ຕາຍປາດສະຈາກຄວາມຮູ້ເລື່ອງພຣະກິດຕິຄຸນ ອາດກາຍເປັນທາຍາດແຫ່ງອານາຈັກຊັ້ນສູງ, **ຄພ** 137:7–8. ຄົນຕາຍຜູ້ທີ່ກັບໃຈເປັນທາຍາດແຫ່ງຄວາມລອດ, **ຄພ** 138:58–59.

ອັບຣາຮາມໄດ້ກາຍເປັນຜູ້ຮັບມູນມໍລະດົກທີ່ຖືກຕ້ອງເພາະຄວາມຊອບທຳຂອງເພິ່ນ, **ອຣຮ** 1:2.

**ທີອານຄໍາ**

ຜູ້ນຳນາຍທະຫານທີ່ຍິ່ງໃຫຍ່ຂອງຊາວນີໄຟໃນພຣະຄຳພີມໍມອນ (ແອວ 50:35; 51–52; 61–62).

**ທີ່ສຸຂະເສີມ.** *ເບິ່ງ* ສະຫວັນ *ບຳອີກ*

ສ່ວນໜຶ່ງຂອງໂລກວິນຍານ ຊຶ່ງໃນນັ້ນວິນຍານທີ່ຊອບທຳຜູ້ໄດ້ຈາກໂລກນີ້ໄປກຳລັງລໍຖ້າຮ່າງກາຍທີ່ຟື້ນຄືນຊີວິດຂອງຕົນ. ມັນເປັນສະພາບແຫ່ງຄວາມສຸກ ແລະ ສັນຕິສຸກ.

ຄຳວ່າ ທີ່ສຸຂະເສີມ ກໍຍັງຖືກໃຊ້ໃນພຣະຄຳພີນຳອີກ ທີ່ໝາຍເຖິງໂລກວິນຍານ (ລກ 23:43), ອານາຈັກຊັ້ນສູງ (2 ກຣທ 12:4), ແລະ ສະພາບອັນຮຸ່ງເຫລື້ອມໃນໄລຍະພັນປີຢູ່ເທິງແຜ່ນດິນໂລກ (ຫຼຊ 1:10).

ຜູ້ໃດທີ່ມີໄຊຊະນະ ເຮົາຈະໃຫ້ຜູ້ນັ້ນກິນຜົນຈາກຕົ້ນໄມ້ແຫ່ງຊີວິດ, ຊຶ່ງຢູ່ໃນສວນຂອງພຣະເຈົ້າ, **ພນມ** 2:7.

ທີ່ສຸຂະເສີມຂອງພຣະເຈົ້າຕ້ອງປ່ອຍວິນຍານຂອງຄົນຊອບທຳຂຶ້ນມາ, **2 ນຟ** 9:13. ວິນຍານຂອງຄົນທີ່ຊອບທຳໄດ້ຖືກຮັບເຂົ້າໃນສະພາບຂອງສັນຕິສຸກ, ຊຶ່ງເອີ້ນວ່າ ທີ່ສຸຂະເສີມ, **ແອວ** 40:11–12. ສານຸສິດທັງໝົດຂອງພຣະເຢຊູໄດ້ຈາກໄປຫາທີ່ສຸຂະເສີມຂອງພຣະເຈົ້າ, ເວັ້ນເສຍແຕ່ສາມຄົນ, **4 ນຟ** 1:14. ໃນບໍ່ຊ້ານີ້ຂ້າພະເຈົ້າຈະໄປພັກຢູ່ໃນທີ່ສຸຂະເສີມຂອງພຣະເຈົ້າ, **ມຣນ** 10:34.

ພຣະຄຣິດໄດ້ປະຕິບັດສາດສະໜາກິດແກ່ວິນຍານທີ່ຊອບທຳໃນທີ່ສຸຂະເສີມ, **ຄພ** 138.

**ທີ່ສຸດຂອງແຜ່ນດິນໂລກ.** *ເບິ່ງ* ໂລກ—ທີ່ສຸດຂອງໂລກ

**ທີ່ຖືກກຳເນີດ.** *ເບິ່ງ* ເກີດໃໝ່, ເກີດຈາກພຣະເຈົ້າ; ບຸດ ແລະ ທິດາຂອງພຣະເຈົ້າ; ລູກໆຂອງພຣະຄຣິດ; ອົງດຽວທີ່ຖືກກຳເນີດ *ນຳອີກ*

ຄືການເກີດ. ການກຳເນີດຄືການຄອດ, ຄືການສ້າງ, ຫລື ຖືກເອີ້ນໃຫ້ເປັນ. ໃນພຣະຄຳພີ, ຖ້ອຍຄຳເຫລົ່ານີ້ມັກຈະຖືກໃຊ້ເລື້ອຍໆເຖິງການເກີດຈາກພຣະເຈົ້າ. ເຖິງແມ່ນວ່າພຣະເຢຊູຄຣິດເປັນພຽງພຣະບຸດອົງດຽວທີ່ຖືກກຳເນີດຂອງພຣະບິດາເທົ່ານັ້ນໃນຄວາມເປັນມະຕະ, ແຕ່ຜູ້ຄົນທັງປວງອາດເປັນຜູ້ຖືກກຳເນີດທາງວິນຍານຂອງພຣະຄຣິດ ໂດຍການຮັບເອົາພຣະອົງ, ເຊື່ອຟັງພຣະບັນຍັດຂອງພຣະອົງ, ແລະ ກາຍເປັນຄົນໃໝ່ຜ່ານ ອຳນາດຂອງພຣະວິນຍານບໍລິສຸດ.

ວັນນີ້ເຮົາໄດ້ໃຫ້ກຳເນີດເຈົ້າ, **ພສສ** 2:7 (ກຈກ 13:33; ຮຣ 1:5–6; 5:5).

ລັດສະໝີພາບຂອງພຣະອົງຄືການເປັນພຣະອົງດຽວທີ່ຖືກກຳເນີດຈາກພຣະບິດາ, **ຢຮ** 1:14 (2 ນຟ 25:12; ແອວ 12:33–34; ຄພ 76:23). ພຣະເຈົ້າຮັກໂລກຫລາຍຈົນໄດ້ປະທານພຣະບຸດອົງດຽວທີ່ຖືກກຳເນີດຂອງພຣະອົງ, **ຢຮ** 3:16 (ຄພ 20:21).

ພຣະຄຣິດໄດ້ໃຫ້ກຳເນີດຜູ້ຄົນຂອງພຣະອົງທາງວິນຍານ, **ມຊຢ** 5:7.

ທຸກຄົນເຫລົ່ານັ້ນທີ່ຖືກກຳເນີດຜ່ານພຣະຜູ້ເປັນເຈົ້າ ເປັນສາດສະໜາຈັກຂອງພຣະບຸດຫົວປີ, **ຄພ** 93:22.

**ທູດ, ເທວະດາ**

ມີບຸກຄົນຢູ່ສອງແບບໃນສະຫວັນທີ່ເອີ້ນວ່າທູດ: ຜູ້ທີ່ເປັນວິນຍານ ແລະ ຜູ້ທີ່ມີຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ. ທູດທີ່ເປັນວິນຍານຍັງບໍ່ໄດ້ຮັບຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ, ຫລື ເຂົາເຈົ້າເປັນວິນຍານ ຜູ້ເຄີຍມີຮ່າງກາຍມະຕະ ແລະ ຕອນນີ້ພວມລໍຖ້າການຟື້ນຄືນຊີວິດ. ທູດທີ່ມີຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ ແມ່ນຜູ້ທີ່ໄດ້ເປັນຄືນມາມີຊີວິດ ຫລື ໄດ້ປ່ຽນສະພາບແລ້ວ.

ມີແຫລ່ງອ້າງອີງຫລາຍບ່ອນຢູ່ໃນພຣະຄຳ

ພີເຖິງວຽກງານຂອງເຫລົ່າທູດ. ບາງເທື່ອທູດກ່າວດ້ວຍສຽງຟ້າຮ້ອງ ໃນຂະນະທີ່ເຂົາເຈົ້າກ່າວຂ່າວສານຂອງພຣະເຈົ້າ (ມຊຍ 27:11–16). ຜູ້ຊາຍມະຕະທີ່ຊອບທຳກໍຖືກເອີ້ນວ່າທູດຄືກັນ (ປຈສ, ປຖກ 19:15 [ພາກທ້ອຍທ້າຍ]). ທູດບາງອົງຮັບໃຊ້ຢູ່ອ້ອມຮອບພຣະທີ່ນັ່ງຂອງພຣະເຈົ້າໃນສະຫວັນ (ແອວ 36:22).

ຂໍ້ພຣະຄຳພີກໍໄດ້ກ່າວເຖິງບໍລິວານຂອງມານຄືກັນ. ນີ້ຄືວິນຍານທີ່ຕິດຕາມລູຊິເຟີ ແລະ ຖືກຂັບໄລ່ອອກຈາກທີ່ປະທັບຂອງພຣະເຈົ້າໃນຊີວິດກ່ອນມະຕະ ແລະ ຖືກໂຍນລົງສູ່ໂລກ (ພນມ 12:1–9; 2 ນຟ 9:9, 16; ຄພ 29:36–37).

ຢາໂຄບໄດ້ເຫັນບັນດາທູດຂອງພຣະເຈົ້າກຳລັງຍ່າງຂຶ້ນຍ່າງລົງ, **ປຖກ** 28:12. ທູດຂອງພຣະເຈົ້າໄດ້ພົບກັບຢາໂຄບ, **ປຖກ** 32:1–2. ກີເດໂອນໄດ້ເຫັນທູດຂອງພຣະຜູ້ເປັນເຈົ້າໜ້າຕໍ່ໜ້າ, **ຜປ** 6:22. ທູດໄດ້ເດ່ມືອອກໄປເພື່ອທຳລາຍເຢຣູຊາເລັມ, **2 ຊມອ** 24:16. ທູດໄດ້ປຸກເອລີຢາ ແລະ ໄດ້ບອກເພິ່ນໃຫ້ລຸກຂຶ້ນ ແລະ ກິນເຂົ້າ, **1 ກສ** 19:5–7. ດານີເອນໄດ້ເຫັນທູດຄັບຣິເອນໃນພາບນິມິດ, **ດນອ** 8:15–16. ທູດມີຄາເອນໄດ້ຊ່ວຍເຫລືອດານີເອນ, **ດນອ** 10:13.

ທູດຄັບຣິເອນຖືກສົ່ງມາຈາກພຣະເຈົ້າ, **ລກ** 1:19, 26–27. ບໍລິວານຂອງມານຈະຖືກລ່າມໂສ້ໄວ້ຈົນເຖິງເວລາແຫ່ງການພິພາກສາ, **ຢດ** 1:6 (2 ເປໂຕ 2:4).

ຜູ້ຄົນໄດ້ເຫັນເຫລົ່າທູດພາກັນລົງມາຈາກສະຫວັນ, **3 ນຟ** 17:24. ໂມໂຣໄນໄດ້ຂຽນກ່ຽວກັບການປະຕິບັດຂອງເຫລົ່າທູດ, **ມຣນ** 7:25–32.

ຖານະປະໂລຫິດແຫ່ງອາໂຣນຖືຂໍກະແຈແຫ່ງການປະຕິບັດຂອງເຫລົ່າທູດ, **ຄພ** 13. ໂມໂຣໄນ, ໂຢຮັນບັບຕິສະໂຕ, ເປໂຕ, ຢາໂກໂບ, ໂຢຮັນ, ໂມເຊ, ເອລີຢາ, ແລະ ອີລາຍ ທັງໝົດໄດ້ປະຕິບັດຕໍ່ໂຈເຊັບ ສະມິດ ໃນຖານະທູດ, **ຄພ** 27:5–12. ພວກເຈົ້າບໍ່ສາມາດທົນກັບການປະຕິບັດຂອງເຫລົ່າທູດ, **ຄພ** 67:13. ມີຄາເອນ, ອັກຄະທູດ, ແມ່ນ ອາດາມ, **ຄພ** 107:54. ທູດເປັນຜູ້ທີ່ໄດ້ຟື້ນຄືນຊີວິດແລ້ວ, ມີຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ, **ຄພ** 129. ບໍ່ມີເຫລົ່າທູດຜູ້ປະຕິບັດຕໍ່ແຜ່ນດິນໂລກນີ້ ນອກຈາກຄົນທີ່ເປັນຂອງມັນ, **ຄພ** 130:5. ຄົນທີ່ບໍ່ເຊື່ອຟັງຕໍ່ກົດແຫ່ງການແຕ່ງງານນິລັນດອນຂອງພຣະເຈົ້າ ທີ່ບໍ່ໄດ້ແຕ່ງງານ ທັງບໍ່ຖືກຍົກໃຫ້ແຕ່ງງານ ຈະຖືກກຳນົດໃຫ້ເປັນທູດສະຫວັນ, **ຄພ** 132:16–17.

**ທູນຂໍ.** *ເບິ່ງ* ອະທິຖານ, ການອະທິຖານ, ຄຳອະທິຖານ *ນຳອີກ*

ຄືການສອບຖາມ, ຖາມ, ຫລື ອ້ອນວອນພຣະເຈົ້າທູນຂໍບາງສິ່ງທີ່ພິເສດ.

ຈົ່ງໝັ່ນຂໍແລ້ວເຈົ້າຈະໄດ້ຮັບ, **ມທ** 7:7. ຖ້າຄົນໃດໃນພວກເຈົ້າຂາດສະຕິປັນຍາ, ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າ, **ຢກບ** 1:5 (ຈສ—ປ 1:7–20).

ທູນຖາມເຮົາດ້ວຍສັດທາ, **1 ນຟ** 15:11. ຖ້າຫາກພວກທ່ານບໍ່ເຂົ້າໃຈຂໍ້ຄວາມເຫລົ່ານີ້, ມັນກໍເປັນເພາະພວກທ່ານບໍ່ທູນຖາມ, **2 ນຟ** 32:4. ທູນຂໍດ້ວຍໃຈຈິງ, **ມຊຍ** 4:10. ພຣະເຈົ້າໄດ້ປະທານສິ່ງໃດກໍຕາມທີ່ພວກທ່ານຂໍດ້ວຍສັດທາ, ຊຶ່ງເປັນສິ່ງທີ່ຖືກຕ້ອງ, **ມຊຍ** 4:21. ທູນຖາມພຣະເຈົ້າຖ້າຫາກເລື່ອງເຫລົ່ານີ້ບໍ່ຈິງ, **ມຣນ** 10:4.

ພວກເຂົາຮັກຄວາມມືດຫລາຍກວ່າຄວາມສະຫວ່າງ; ສະນັ້ນ ພວກເຂົາຈຶ່ງບໍ່ທູນຂໍຈາກເຮົາ, **ຄພ** 10:21. ເຈົ້າຖືກບັນຊາໃຫ້ທູນຂໍຈາກພຣະເຈົ້າໃນທຸກສິ່ງ, **ຄພ** 46:7.

**ເທດສະໜາຢູ່ໂນນພູ.** *ເບິ່ງ* ຄຳບູລົມສຸກ; ພຣະເຢຊູຄຣິດ *ນຳອີກ*

ຄຳເທດສະໜາ ທີ່ກ່າວໂດຍອົງພຣະເຢຊູຄຣິດເຈົ້າ ແກ່ສານຸສິດຂອງພຣະອົງ ຜູ້ກຳລັງຈະຖືກສົ່ງອອກໄປເຜີຍແຜ່ (ມທ 5–7; ລກ 6:20–49). ພຣະຜູ້ເປັນເຈົ້າໄດ້ກ່າວເທດສະໜາ ບໍ່ດົນຫລັງຈາກໄດ້ເອີ້ນອັກຄະສາວົກສິບສອງ.

ຄຳເທດສະໜາໄດ້ຖືກອະທິບາຍໂດຍການແປພຣະຄຣິສຕະທຳຄຳພີຂອງໂຈເຊັບ ສະມິດ ແລະ ໂດຍຄຳເທດສະໜາທີ່ຄ້າຍຄືກັນ ຊຶ່ງ

ຖືກບັນທຶກໄວ້ໃນ 3 ນຟ 12–14 ທີ່ສະແດງໃຫ້ເຫັນວ່າ ພາກສ່ວນທີ່ສຳຄັນຂອງຄຳເທດສະໜາ ໄດ້ຖືກສູນເສຍໄປຈາກເລື່ອງລາວໃນມັດທາຍ.

**ເທເລີ, ຈອນ**

ປະທານຄົນທີສາມຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.

ໄດ້ຖືກເອີ້ນສູ່ສະພາອັກຄະສາວົກສິບສອງ, **ຄພ** 118:6 (ຄພ 124:128–129). ໄດ້ຖືກບາດເຈັບຕອນມີການສັງຫານ, **ຄພ** 135:2. ໄດ້ຢູ່ໃນບັນດາຜູ້ຄົນທີ່ຍິ່ງໃຫຍ່ ຊຶ່ງໂຈເຊັບ ແອັຟ ສະມິດ ໄດ້ເຫັນໃນໂລກວິນຍານ, **ຄພ** 138:53–56.

**ແທ່ນບູຊາ.** *ເບິ່ງ* ເສຍສະລະ, ການເສຍສະລະ *ບຳອິກ*

ສະຖານທີ່ໃຊ້ສຳລັບການເຜົາເຄື່ອງບູຊາ, ການຖວາຍ, ແລະ ນະມັດສະການ.

ໂນອາ ໄດ້ ສ້າງ ແທ່ນບູຊາແທ່ນໜຶ່ງຖວາຍແກ່ພຣະຜູ້ເປັນເຈົ້າ ແລະ ເຜົາເຄື່ອງບູຊາຖວາຍ, **ປຖກ** 8:20. ອັບຣາມໄດ້ສ້າງແທ່ນບູຊາແທ່ນໜຶ່ງຖວາຍແກ່ພຣະຜູ້ເປັນເຈົ້າ, **ປຖກ** 12:7–8. ອັບຣາຮາມໄດ້ມັດອີຊາກ ລູກຊາຍຂອງເພິ່ນໄວ້ເທິງແທ່ນບູຊາ, **ປຖກ** 22:9 (ປຖກ 22:1–13). ຢາໂຄບ ໄດ້ສ້າງແທ່ນບູຊາແທ່ນໜຶ່ງຂຶ້ນ ແລະ ໄດ້ເອີ້ນບ່ອນນັ້ນວ່າເບັດເອນ, **ປຖກ** 35:6–7. ເອລີຢາໄດ້ສ້າງແທ່ນບູຊາແທ່ນໜຶ່ງ ແລະ ໄດ້ທ້າທາຍພວກປະໂລຫິດຂອງບາອານ, **1 ກສ** 18:17–40.

ເມື່ອເຈົ້າເອົາເຄື່ອງມາຖວາຍທີ່ເທິງແທ່ນບູຊາ, ທຳອິດໃຫ້ເຈົ້າກັບໄປຄືນດີກັບອ້າຍເອື້ອຍນ້ອງຂອງເຈົ້າສາກ່ອນ, **ມທ** 5:23–24. ຂ້າພະເຈົ້າໄດ້ເຫັນດວງວິນຍານຢູ່ໃຕ້ແທ່ນບູຊາ ເປັນດວງວິນຍານຂອງຄົນທັງຫລາຍທີ່ໄດ້ຖືກຂ້າ ເພາະປະກາດພຣະຄຳຂອງພຣະເຈົ້າ, **ພນມ** 6:9 (ຄພ 135:7).

ລີໄຮໄດ້ສ້າງແທ່ນບູຊາດ້ວຍຫີນ, ແລະຖວາຍຄວາມຂອບພຣະຄຸນແດ່ພຣະຜູ້ເປັນເຈົ້າ, **1 ນຟ** 2:7.

ອັບຣາຮາມໄດ້ຖືກໄວ້ຊີວິດຈາກຄວາມຕາຍເທິງແທ່ນບູຊາຂອງເອເຄນາ, **ອຣຮ** 1:8–20.

**ເທວະດາ.** *ເບິ່ງ* ທູດ, ເທວະດາ

**ທົ່ງ.** *ເບິ່ງ* ສວນອະງຸ່ນຂອງພຣະຜູ້ເປັນເຈົ້າ; ໂລກ *ບຳອິກ*

ໃນພຣະຄຳພີ, ເປັນສະຖານທີ່ເປີດແປນທີ່ຜູ້ຄົນໃຊ້ເຮັດຮົ້ວເຮັດສວນ ຫລື ປູກຫຍ້າ. ສ່ວນຫລາຍມັນປຽບເໝືອນໂລກ ແລະ ຜູ້ຄົນໃນໂລກ.

ທົ່ງຄືໂລກ, **ມທ** 13:38. ອານາຈັກສະຫວັນປຽບເໝືອນຊັບທີ່ເຊື່ອງໄວ້ໃນທົ່ງ, **ມທ** 13:44. ພໍ່ໄດ້ເຫັນທົ່ງອັນກວ້າງໃຫຍ່, **1 ນຟ** 8:9, 20. ເຂົ້າຢູ່ໃນທົ່ງສຸກແລ້ວ, **ແອວ** 26:5.

ທົ່ງກໍຂາວພ້ອມແລ້ວທີ່ຈະເກັບກ່ຽວ, **ຄພ** 4:4 (ຄພ 6:3; 11:3; 12:3; 14:3; 31:4; 33:3, 7). ທົ່ງຄືໂລກ, **ຄພ** 86:1–2. ເຮົາຈະປຽບທຽບອານາຈັກດັ່ງກ່າວໃສ່ກັບຊາຍຄົນໜຶ່ງທີ່ມີທົ່ງ, **ຄພ** 88:51.

**ໂທດປະຫານຊີວິດ.** *ເບິ່ງ* ຄາດຕະກຳ, ການຄາດຕະກຳ *ບຳອິກ*

ການລົງໂທດຈົນເຖິງຕາຍເພາະການເຮັດອາຊະຍາກຳ, ໂດຍສະເພາະກ່ຽວພັນກັບການລົງໂທດເນື່ອງດ້ວຍການຄາດຕະກຳ.

ຜູ້ໃດກໍຕາມທີ່ຂ້າເພື່ອນມະນຸດ ກໍຈະຖືກເພື່ອນມະນຸດຄົນອື່ນຂ້າ, **ປຖກ** 9:6 (ປຈສ, ປຖກ 9:12–13). ຄາດຕະກອນຈະຖືກລົງໂທດເຖິງຕາຍ, ຈບຊ 35:16.

ຄາດຕະກອນທີ່ຂ້າຄົນໂດຍເຈດຕະນາຈະຕ້ອງຕາຍ, **2 ນຟ** 9:35. ເຈົ້າຈຶ່ງຕ້ອງໄດ້ຮັບໂທດປະຫານຊີວິດຕາມກົດ, **ແອວ** 1:13–14. ຄົນທີ່ເຮັດຄາດຕະກຳຈະຖືກລົງໂທດເຖິງແກ່ຄວາມຕາຍ, **ແອວ** 1:18. ກົດໝາຍຕ້ອງການຊີວິດຂອງເຂົາຜູ້ເປັນຄາດຕະກອນ, **ແອວ** 34:12.

ຄົນທີ່ຂ້າຄົນຈະຕາຍ, **ຄພ** 42:19.

**ໂທມາ**

ໃນພຣະຄຳພີໃໝ່, ຜູ້ໜຶ່ງໃນກຸ່ມອັກຄະ

ສາວົກສິບສອງດັ້ງເດີມຂອງພຣະຜູ້ຊ່ວຍໃຫ້ລອດ ລະຫວ່າງການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະອົງ. (ມທ 10:2–3; ຢຮ 14:5). ຊື່ໃນພາສາກຣີກແມ່ນ ຝາແຝດ (ຢຮ 20:24–29; 21:2). ເຖິງແມ່ນວ່າໂທມາໄດ້ສົງໄສເລື່ອງການຟື້ນຄືນພຣະຊົນຂອງພຣະເຢຊູ ຈົນເຖິງຕອນທີ່ລາວໄດ້ເຫັນພຣະຜູ້ຊ່ວຍໃຫ້ລອດດ້ວຍຕົນເອງ, ແລ້ວບຸກຄະລິກລັກສະນະທີ່ເຂັ້ມແຂງຂອງລາວ ໄດ້ເຮັດໃຫ້ລາວເຕັມໃຈທີ່ຈະປະເຊີນກັບການຂົ່ມເຫັງ ແລະ ຄວາມຕາຍ ນຳພຣະຜູ້ເປັນເຈົ້າ (ຢຮ 11:16; 20:19–25).

**ທຳນາຍ, ການທຳນາຍ, ຄຳທຳນາຍ.** *ເບິ່ງ* ສາດສະດາ; ສາດສະດາຍິງ; ເປີດເຜີຍ, ການເປີດເຜີຍ; ຜູ້ພະຍາກອນ *ນຳອີກ*

ຄຳທຳນາຍຮ່ວມດ້ວຍຄຳດົນໃຈ ຫລື ການຊົງນຳຈາກສະຫວັນ, ຊຶ່ງບຸກຄົນໄດ້ຮັບຜ່ານທາງການເປີດເຜີຍ ຈາກພຣະວິນຍານບໍລິສຸດ. ປະຈັກພະຍານເຖິງພຣະເຢຊູ ເປັນວິນຍານຂອງການທຳນາຍ (ພນມ 19:10). ຄຳທຳນາຍອາດກ່ຽວຂ້ອງກັບອະດີດ, ປະຈຸບັນ, ຫລື ອະນາຄົດ. ເມື່ອບຸກຄົນໃດໜຶ່ງກ່າວຄຳທຳນາຍ, ເພິ່ນຈະກ່າວ ຫລື ຊົງນສິ່ງທີ່ພຣະເຈົ້າປະສົງໃຫ້ເພິ່ນຮູ້ ເພື່ອເປັນການດີສຳລັບເພິ່ນ ຫລື ເປັນການດີສຳລັບຄົນອື່ນໆ. ຜູ້ຄົນສາມາດຮັບການທຳນາຍ ຫລື ການເປີດເຜີຍສຳລັບຊີວິດຂອງຕົນເອງໄດ້.

ຢາກໃຫ້ພຣະເຈົ້າເຮັດໃຫ້ປະຊາຊົນທຸກໆຄົນຂອງພຣະຜູ້ເປັນເຈົ້າເປັນຜູ້ທຳນາຍ, **ຈບຊ** 11:29. ລູກຊາຍຍິງພວກເຈົ້າຈະປະກາດພຣະທຳ, **ຢອ** 2:28 (ກຈກ 2:17–18). ພຣະອົງໄດ້ເປີດເຜີຍຄວາມລັບຂອງພຣະອົງແກ່ຜູ້ທຳນາຍຄືຜູ້ຮັບໃຊ້ຂອງພຣະອົງ, **ອມ** 3:7.

ຜູ້ໃດຜູ້ໜຶ່ງຈະຕີຄວາມໝາຍຂອງຄຳທຳນາຍໃນພຣະຄຳພີເອົາເອງບໍ່ໄດ້, **2 ປຕ** 1:20.

ຊາວນີໄຟໄດ້ຮັບການເປີດເຜີຍຫລາຍເລື່ອງ ແລະ ໄດ້ມີວິນຍານແຫ່ງການທຳນາຍ, **ຢຄ** 4:6, 13. ແອວມາ ແລະ ແອມມິວເລັກ ໄດ້ຮູ້ຈັກເຈດຕະນາຂອງໃຈຂອງຊີເອສຣອມ ໂດຍວິນຍານແຫ່ງການທຳນາຍ, **ແອວ** 12:7. ວິບັດແກ່ຄົນທີ່ເວົ້າວ່າ ພຣະຜູ້ເປັນເຈົ້າບໍ່ກະທຳວຽກງານໂດຍການທຳນາຍ, **3 ນຟ** 29:6. ຈົ່ງຄົ້ນຄວ້າຄຳທຳນາຍຂອງເອຊາຢາ, **ມມ** 8:23.

ຄຳທຳນາຍຈະສຳເລັດຄົບຖ້ວນທັງໝົດ, **ຄພ** 1:37–38.

ມະນຸດຕ້ອງໄດ້ຖືກເອີ້ນຈາກພຣະເຈົ້າໂດຍການພະຍາກອນ, **ຫຼຊ** 1:5.

**ທຳມະສາລາ.** *ເບິ່ງ* ຊາວຢິວ *ນຳອີກ*

ສະຖານທີ່ຊຸມນຸມ ໃຊ້ສຳລັບຈຸດປະສົງຂອງສາດສະໜາ. ໃນສະໄໝຂອງພຣະຄຳພີໃໝ່, ເຄື່ອງໃຊ້ໃນນັ້ນ ກໍບໍ່ມີຫຍັງຫລາຍ, ມີຫີບໜ່ວຍໜຶ່ງທີ່ບັນຈຸກໍ້ບັນຍັດ ແລະ ການຊົງນສັກສິດອື່ນໆ, ໂຕະອ່ານໜັງສື, ແລະ ຕັ່ງນັ່ງນະມັດສະການ.

ສະພາໃນທ້ອງຖິ່ນຂອງພວກຜູ້ເຖົ້າແກ່ເປັນຜູ້ດູແລທຳມະສາລາ ແຕ່ລະແຫ່ງ. ເຂົາເຈົ້າເປັນຜູ້ຕັດສິນໃຈວ່າ ຜູ້ໃດຄວນຖືກອະນຸຍາດໃຫ້ເຂົ້າໄປ ຫລື ຄວນຖືກກີດກັນ (ຢຮ 9:22; 12:42). ໜ້າທີ່ສຳຄັນທີ່ສຸດແມ່ນຫົວໜ້າທຳມະສາລາ (ມຣກ 5:22; ລູກາ 13:14). ໂດຍທົ່ວໄປແລ້ວ ລາວຈະເປັນຜູ້ຊົງນ, ດູແລຕຶກ, ແລະ ຄວບຄຸມພິທີນະມັດສະການ. ບຸກຄົນໜຶ່ງໄດ້ປະຕິບັດໜ້າທີ່ສະໝຽນ (ລກ 4:20).

ມີສະຖານທຳມະສາລາຢູ່ທຸກໝູ່ບ້ານ ບ່ອນທີ່ຊາວຢິວອາໄສຢູ່, ທັງໃນຟີລິດສະຕິນ ແລະ ໃນບ່ອນອື່ນໆ. ສິ່ງນີ້ເປັນການຊ່ວຍເຫລືອທີ່ໃຫຍ່ຫລວງ ໃນການປະກາດພຣະກິດຕິຄຸນຂອງພຣະເຢຊູຄຣິດ ເພາະວ່າຜູ້ສອນສາດສະໜາຂອງສາດສະໜາຈັກໃນສະໄໝນັ້ນ ສາມາດກ່າວຢູ່ໃນທຳມະສາລາ (ກຈກ 13:5, 14; 14:1; 17:1, 10; 18:4). ການປະຕິບັດທີ່ເໝືອນກັນນີ້ກໍມີຢູ່ໃນບັນດາຜູ້ສອນສາດສະໜາ ໃນພຣະຄຳພີມໍມອນ (ແອວ 16:13; 21:4–5; 32:1), ເຊັ່ນດຽວກັບ ໃນບັນດາຜູ້ສອນສາດສະໜາລຸ້ນທຳອິດ ໃນຍຸກສະໄໝນີ້ (ຄພ 66:7; 68:1).

**ນະທານາເອັນ.** *ເບິ່ງ* ບາຣະໂທໂລມາຍ *ນຳອີກ*

ອັກຄະສາວົກຂອງພຣະຄຣິດ ແລະ ເພື່ອນ

ຂອງ ຟີລິບ ໃນ ພຣະ ຄຳ ພີ ໃໝ່ (ຢຮ 1:45–51). ລາວມາຈາກບ້ານການາ ໃນເມືອງຄາລີເລ (ຢຮ 21:2). ພຣະ ຄຣິດໄດ້ກ່າວ ວ່ານະທານາເອັນເປັນຊາວອິດສະຣາເອນທີ່ປາດສະຈາກອຸບາຍ (ຢຮ 1:47). ໂດຍທົ່ວໄປແລ້ວ ຜູ້ຄົນຄິດວ່າ ລາວກັບບາຣະໂທໂລມາຍ ເປັນຄົນໆດຽວກັນ (ມທ 10:3; ມຣກ 3:18; ລກ 6:14; ຢຮ 1:43–45).

**ນະມັດສະການ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ບຳອິກ*

ຄວາມຮັກ, ຄວາມຄາລະວະ, ການຮັບໃຊ້, ແລະ ການອຸທິດຕົນສຳລັບພຣະເຈົ້າ (ຄພ 20:19). ການນະມັດສະການແມ່ນຮ່ວມດ້ວຍການອະທິຖານ, ການຖືສິນອົດເຂົ້າ, ການຮັບໃຊ້ໃນສາດສະໜາຈັກ, ການມີສ່ວນຮ່ວມໃນພິທີການຂອງພຣະກິດຕິຄຸນ, ແລະ ການປະຕິບັດອື່ນໆ ທີ່ສະແດງຄວາມອຸທິດຕົນ ແລະ ຄວາມຮັກຕໍ່ພຣະເຈົ້າ.

ຢ່ານະມັດສະການພຣະອື່ນ ນອກຈາກເຮົາ, **ອພຍ** 20:3 (ອພຍ 32:1–8, 19–35; ພສສ 81:9).

ນະມັດສະການພຣະບິດາດ້ວຍຈິດວິນຍານ ແລະ ຄວາມຈິງ, **ຢຮ** 4:23. ຈົ່ງນະມັດສະການພຣະອົງ ຜູ້ທີ່ໄດ້ສ້າງສະຫວັນ ແລະ ແຜ່ນດິນໂລກ, **ພນມ** 14:7 (ຄພ 133:38–39).

ນະມັດສະການພຣະອົງດ້ວຍສຸດພະລັງ, ສຸດຈິດໃຈ, ແລະ ສຸດກຳລັງຂອງພວກທ່ານ, **2 ນຟ** 25:29. ພວກເພິ່ນໄດ້ເຊື່ອໃນພຣະຄຣິດ ແລະ ນະມັດສະການພຣະບິດາໃນພຣະນາມຂອງພຣະອົງ, **ຢຄ** 4:5. ຊີນັດໄດ້ສອນວ່າມະນຸດຄວນອະທິຖານ ແລະ ນະມັດສະການໃນທຸກສະຖານທີ່, **ແອວ** 33:3–11. ນະມັດສະການພຣະເຈົ້າດ້ວຍວິນຍານ ແລະ ດ້ວຍຄວາມຈິງ, ບໍ່ວ່າພວກທ່ານຈະຢູ່ບ່ອນໃດກໍຕາມ, **ແອວ** 34:38. ຜູ້ຄົນໄດ້ກາບລົງແທບພຣະບາດຂອງພຣະເຢຊູ ແລະ ໄດ້ນະມັດສະການພຣະອົງ, **3 ນຟ** 11:17.

ມະນຸດທັງປວງຈະຕ້ອງກັບໃຈ, ເຊື່ອໃນພຣະນາມຂອງພຣະເຢຊູຄຣິດ, ແລະ ນະມັດສະການພຣະບິດາໃນພຣະນາມຂອງພຣະອົງ, **ຄພ** 20:29. ເຮົາມອບຄຳກ່າວເຫລົ່ານີ້ແກ່ພວກເຈົ້າ ເພື່ອພວກເຈົ້າຈະເຂົ້າໃຈ ແລະ ຮູ້ວ່າຈະນະມັດສະການຢ່າງໃດ, ແລະ ຮູ້ວ່າພວກເຈົ້ານະມັດສະການສິ່ງໃດ, **ຄພ** 93:19.

ພຣະເຈົ້າອົງດຽວນີ້ເທົ່ານັ້ນທີ່ຂ້າພະເຈົ້າຈະນະມັດສະການ, **ມຊ** 1:12–20. ພວກເຮົາເຊື່ອຖືສິດທິແຫ່ງການນະມັດສະການພຣະເຈົ້າ ຜູ້ມີລິດທານຸພາບ, **ຫຼຊ** 1:11.

**ນະລົກ.** *ເບິ່ງ* ຄວາມຕາຍທາງວິນຍານ; ບຸດແຫ່ງຄວາມຈິບຫາຍ; ມານ; ອັບປະໂຫຍດ, ຄວາມອັບປະໂຫຍດ *ບຳອິກ*

ການເປີດເຜີຍຍຸກສຸດທ້າຍກ່າວເຖິງນະລົກຢ່າງໜ້ອຍໃນຄວາມໝາຍສອງຢ່າງ. ທຳອິດ, ມັນເປັນສະຖານທີ່ພັກເຊົາຊົ່ວຄາວຢູ່ໃນໂລກວິນຍານສຳລັບຜູ້ທີ່ບໍ່ເຊື່ອໃນຕອນທີ່ເປັນມະຕະ. ໃນຄວາມໝາຍນີ້, ນະລົກມີຈຸດຈົບ. ວິນຍານທີ່ຢູ່ບ່ອນນັ້ນຈະໄດ້ຮັບການສິດສອນເລື່ອງພຣະກິດຕິຄຸນ, ແລະ ບາງເທື່ອຫລັງຈາກເຂົາເຈົ້າໄດ້ກັບໃຈແລ້ວ, ເຂົາເຈົ້າຈະຟື້ນຄືນຊີວິດໄປສູ່ລັດສະໝີພາບລະດັບໃດໜຶ່ງທີ່ເໝາະສົມສຳລັບເຂົາເຈົ້າ. ຜູ້ທີ່ບໍ່ກັບໃຈ, ແຕ່ບໍ່ໄດ້ເປັນບຸດແຫ່ງຄວາມຈິບຫາຍ, ຈະຄົງຢູ່ໃນນະລົກຕໍ່ໄປໃນໄລຍະພັນປີ. ຫລັງຈາກໜຶ່ງພັນປີແຫ່ງຄວາມທໍລະມານ, ເຂົາເຈົ້າຈະຟື້ນຄືນຊີວິດສູ່ລັດສະໝີພາບຂອງຊັ້ນຕ່ຳ (ຄພ 76:81–86; 88:100–101).

ສອງ, ມັນເປັນສະຖານທີ່ຖາວອນຂອງຜູ້ທີ່ບໍ່ໄດ້ຖືກໄຖ່ໂດຍການຊົດໃຊ້ຂອງພຣະເຢຊູຄຣິດ. ໃນຄວາມໝາຍນີ້, ນະລົກເປັນສະຖານທີ່ຖາວອນ. ມັນເປັນສະຖານທີ່ສຳລັບຜູ້ທີ່ຖືກພົບວ່າ "ຍັງສົກກະປົກຢູ່" (ຄພ 88:35, 102). ນີ້ເປັນບ່ອນຂອງຊາຕານ, ບໍລິວານຂອງມັນ, ແລະ ບຸດແຫ່ງຄວາມຈິບຫາຍ—ຜູ້ທີ່ປະຕິເສດພຣະບຸດຫລັງຈາກທີ່ພຣະບິດາໄດ້ເປີດເຜີຍພຣະອົງແລ້ວ—ຈະອາໄສຢູ່ທີ່ນັ້ນຊົ່ວນິລັນດອນ (ຄພ 76:43–46).

ບາງເທື່ອພຣະຄຳພີກ່າວເຖິງນະລົກວ່າເປັນຄວາມມືດພາຍນອກ.

ຈິດວິນຍານຂອງດາວິດຈະບໍ່ຖືກປະຖິ້ມໄວ້ໃນນະລົກ, **ພສສ** 16:10 (ພສສ 86:13).

ຕ້ອງຕົກນະລົກຢູ່ໃນໄຟຊຶ່ງມອດບໍ່ເປັນຈັກເທື່ອ, **ມຣກ** 9:43 (ມຊຢ 2:38). ເມື່ອຢູ່ໃນແດນມໍລະນາກໍເປັນທຸກເວດທະນາຫລາຍ ເສດຖີນັ້ນຈຶ່ງເງີຍໜ້າຂຶ້ນ, **ລກ** 16:22–23 (ຄພ 104:18). ຄວາມຕາຍ ແລະ ແດນມໍລະນາກໍໄດ້ສົ່ງຄົນທັງຫລາຍໃນທີ່ນັ້ນຄືນມາ, **ພນມ** 20:13.

ມີບ່ອນໜຶ່ງຕຽມໄວ້ແລ້ວ, ແທ້ຈິງແລ້ວ, ແມ່ນນະລົກອັນເປັນຕາຢ້ານ, **1 ນຟ** 15:35. ຄວາມປະສົງຂອງເນື້ອໜັງໃຫ້ອຳນາດແກ່ວິນຍານຂອງມານທີ່ຈະນຳເຮົາລົງນະລົກ, **2 ນຟ** 2:29. ພຣະຄຣິດໄດ້ຕຽມທາງເພື່ອການປົດປ່ອຍຂອງພວກເຮົາຈາກຄວາມຕາຍ ແລະ ນະລົກ, **2 ນຟ** 9:10–12. ຜູ້ທີ່ຍັງສົກກະປົກຢູ່ຄືເກົ່າຈະອອກໄປຫາຄວາມທໍລະມານອັນເປັນນິດ, **2 ນຟ** 9:16. ມານກ່ອມຈິດວິນຍານຂອງພວກເຂົາ ແລະ ພາພວກເຂົາລົງໄປຫານະລົກຢ່າງລະມັດລະວັງ, **2 ນຟ** 28:21. ພຣະເຢຊູໄດ້ໄຖ່ຈິດວິນຍານຂອງຂ້າພະເຈົ້າຈາກນະລົກ, **2 ນຟ** 33:6. ເຮັດໃຫ້ຕົວຫລຸດພົ້ນຈາກຄວາມເຈັບປວດແຫ່ງນະລົກ, **ຢຄ** 3:11. ຈະຖືກມານເອົາໄປເປັນຊະເລີຍ ແລະ ຖືກນຳໄປດ້ວຍຄວາມປະສົງຂອງມັນລົງໄປຫາຄວາມພິນາດຄືສາຍໂສ້ແຫ່ງນະລົກ, **ແອວ** 12:11. ຄົນຊົ່ວຈະຖືກໄລ່ໃຫ້ອອກໄປຫາຄວາມມືດພາຍນອກຈົນກວ່າເຖິງເວລາແຫ່ງການຟື້ນຄືນຊີວິດຂອງເຂົາ, **ແອວ** 40:13–14. ຄົນສົກກະປົກຈະທຸກທໍລະມານໃຈທີ່ຈະຢູ່ກັບພຣະເຈົ້າຍິ່ງກວ່າຈະຢູ່ໃນນະລົກ, **ມມ** 9:4.

ການລົງໂທດຊຶ່ງເຮົາມອບໃຫ້ຈາກມືຂອງເຮົາແມ່ນການລົງໂທດທີ່ບໍ່ມີທີ່ສຸດ, **ຄພ** 19:10–12. ນະລົກເປັນບ່ອນຕຽມໄວ້ສຳລັບມານກັບບໍລິວານຂອງມັນ, **ຄພ** 29:37–38. ຜູ້ທີ່ຮັບຮູ້ພຣະເຈົ້າຈະຖືກປົດປ່ອຍຈາກຄວາມຕາຍ ແລະ ໂສ້ແຫ່ງນະລົກ, **ຄພ** 138:23.

**ນັບຖື.** *ເບິ່ງ* ຄາລະວະ, ຄວາມຄາລະວະ; ໃຫ້ກຽດ *ບຳອີກ*

ທີ່ຈະຖືວ່າບຸກຄົນ ຫລື ບາງສິ່ງທີ່ມີຄ່າ ແລະ ລາຄາ, ໂດຍສະເພາະໃນເລື່ອງພຣະກິດຕິຄຸນ. ທ່ານຖືກດູໝິ່ນປະໝາດ, ແລະ ພວກເຮົາບໍ່ໄດ້ນັບຖືທ່ານເລີຍ, **ອຊຢ** 53:3–4.

ຊຶ່ງເປັນທີ່ນັບຖືໃນທ່າມກາງມະນຸດກໍເປັນທີ່ລັງກຽດຕໍ່ພຣະພັກຂອງພຣະເຈົ້າ, **ລກ** 16:15. ຢ່າເຮັດສິ່ງໃດໃນທາງຊີງດີ ຫລື ຖືດີກັນ, **ຟລປ** 2:3.

ພຣະຜູ້ເປັນເຈົ້າຖືວ່າ ເນື້ອໜັງທັງຫລາຍເປັນອັນດຽວ, **1 ນຟ** 17:35. ໃຫ້ທຸກຄົນນັບຖືເພື່ອນບ້ານຄືກັບຕົນເອງ, **ມຊຢ** 27:4 (ຄພ 38:24–25).

ໃນວັນທີ່ພວກເຂົາມີສັນຕິສຸກ ພວກເຂົາຖືຄຳແນະນຳຂອງເຮົາເປັນເລື່ອງຫລິ້ນໆ, **ຄພ** 101:8.

**ນາງມາຣີຍິງສາວບໍລິສຸດ.** *ເບິ່ງ* ມາຣີ, ມານດາຂອງພຣະເຢຊູ

**ນາຊາເຣັດ.** *ເບິ່ງ* ພຣະເຢຊູຄຣິດ *ບຳອີກ*

ຄຸ້ມບ້ານໜຶ່ງທີ່ຕັ້ງຢູ່ຄ້ອຍພູເບື້ອງຕາເວັນຕົກຂອງທະເລຄາລີເລ. ນາຊາເຣັດເປັນບ້ານເກີດເມືອງນອນຂອງພຣະເຢຊູ (ມທ 2:23). ພຣະເຢຊູໄດ້ສອນໃນທຳມະສາລາຢູ່ນາຊາເຣັດ, ແລະ ໄດ້ປະກາດວ່າ ພຣະອົງໄດ້ເຮັດສຳເລັດຕາມທີ່ມີທຳນາຍໄວ້ຢູ່ໃນເອຊາຢາ 61:1–2 (ມທ 13:54–58; ມຣກ 6:1–6; ລກ 4:16–30).

**ນາຍທະຫານ**

ເຈົ້າໜ້າທີ່ໃນກອງທັບໂຣມ ຜູ້ເປັນນາຍທະຫານຈຳນວນ 50 ຫາ 100 ຄົນ. ທະຫານກຸ່ມນີ້ເປັນກຸ່ມໜຶ່ງໃນຈຳນວນຫົກສິບກຸ່ມຂອງກອງທັບໃຫຍ່ຂອງຊາວໂຣມ. (ເບິ່ງ ມທ 8:5; ລກ 23:47; ກຈກ 10:1–8.)

**ນາຍພາສີ.** *ເບິ່ງ* ຈັກກະພັດໂຣມ *ບຳອີກ*

ໃນກຸງໂຣມສະໄໝບູຮານ, ເປັນຄົນທີ່ໄປເກັບພາສີໃຫ້ລັດຖະບານ. ສ່ວນຫລາຍແລ້ວຄົນເກັບພາສີຈະຖືກຊາວຢິວກຽດຊັງ. ຄົນເກັບພາສີບາງຄົນໄດ້ຮັບເອົາພຣະກິດຕິຄຸນຢ່າງເຕັມໃຈ (ມທ 9:9–10; ລກ 19:2–8).

**ນາທານ.** *ເບິ່ງ* ດາວິດ *ບຳອີກ*

ສາດສະດາໃນພຣະຄຳພີເດີມໃນວັນເວລາ

ຂອງກະສັດດາວິດ. ເມື່ອດາວິດໄດ້ສະເໜີສ້າງພຣະວິຫານສຳລັບພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າໄດ້ແນະນຳນາທານໃຫ້ບອກດາວິດວ່າບໍ່ໃຫ້ເພິ່ນສ້າງມັນ. ນາທານກໍຍັງໄດ້ຕິຕຽນດາວິດນຳອີກ ທີ່ເປັນສາເຫດໃຫ້ອູຣີອາ ນາຍທະຫານຄົນໜຶ່ງຂອງເພິ່ນຖືກຂ້າຕາຍ, ແລະການເອົານາງບັດເຊບາ ເມຍຂອງອູຣີອາມາເປັນມະເຫສີ (2 ຊມອ 12:1–15; ຄພ 132:38–39). ສາດົກ, ພ້ອມດ້ວຍນາທານ, ໄດ້ເຈີມໂຊໂລໂມນ ລູກຊາຍຂອງດາວິດໃຫ້ເປັນກະສັດ (1 ກສ 1:38–39, 45).

**ນາອາມານ.** *ເບິ່ງ* ເອລີຊາ *ນຳອີກ*

ໃນພຣະຄຳພີເດີມ, ຜູ້ບັງຄັບບັນຊາກອງທັບທະຫານຂອງກະສັດຊີເຣຍ. ລາວຍັງເປັນພະຍາດຂີ້ທູດນຳອີກ. ຜ່ານສັດທາຂອງນາງສາວໃຊ້ຊາວອິດສະຣາເອນ ລາວຈຶ່ງໄດ້ໄປຫາສາດສະດາເອລີຊາ. ລາວໄດ້ຫາຍດີຈາກພະຍາດຂີ້ທູດ ໂດຍການຖ່ອມຕົວ ແລະ ລົງໄປອາບນ້ຳເຈັດເທື່ອຢູ່ໃນແມ່ນ້ຳຈໍແດນ ຕາມທີ່ ສາດສະດາເອລີຊາໄດ້ແນະນຳ (2 ກສ 5:1–19; ລກ 4:27).

**ນາໂອມີ.** *ເບິ່ງ* ຣຸດ *ນຳອີກ*

ໃນພຣະຄຳພີເດີມ, ຜູ້ຍິງທີ່ຊອບທຳ ແລະເປັນເມຍຂອງເອລີເມເຫລັກ (ນຣ 1–4). ເອລີເມເຫລັກ ແລະ ນາງນາໂອມີ ໄດ້ພາຄອບຄົວໄປທີ່ໂມອາບ ເພື່ອໜີຈາກຄວາມອຶດຢາກ. ຫລັງຈາກເອລີເມຫລັກ ແລະ ລູກຊາຍສອງຄົນຂອງນາງໄດ້ຕາຍໄປ, ນາງນາໂອມີຈຶ່ງໄດ້ກັບຄືນໄປເບັດເລເຮັມພ້ອມດ້ວຍນາງຣຸດ ລູກໄພ້ຂອງນາງ.

**ນາຮູມ**

ສາດສະດາໃນພຣະຄຳພີເດີມແຫ່ງຄາລີເລ ຜູ້ໄດ້ບັນທຶກຄຳທຳນາຍຂອງເພິ່ນໄວ້ປະມານ 642 ຫາ 606 ປີ ກ່ອນ ຄ.ສ.

*ພຣະທຳນາຮູມ:* ບົດທີ 1 ກ່າວເຖິງໂລກທີ່ຖືກເຜົາ ໃນການສະເດັດມາຄັ້ງທີສອງ ແລະເຖິງຄວາມເມດຕາ ແລະ ອຳນາດຂອງພຣະຜູ້ເປັນເຈົ້າ. ບົດທີ 2 ບອກເຖິງຄວາມພິນາດຂອງນີເນເວ, ຊຶ່ງບອກລ່ວງໜ້າກ່ຽວກັບສິ່ງທີ່ຈະມາເຖິງໃນຍຸກສຸດທ້າຍ. ບົດທີ 3 ສືບຕໍ່ບອກລ່ວງໜ້າກ່ຽວກັບຄວາມພິນາດທີ່ໜ້າເສົ້າສະຫລົດໃຈຂອງນີເນເວ.

**ນິນທາ.** *ເບິ່ງ* ຂ່າວລື; ເວົ້າຈາບໍ່ດີ *ນຳອີກ*

ທີ່ຈະແບ່ງປັນຂໍ້ມູນ ຫລື ລາຍລະອຽດກ່ຽວກັບຄົນໜຶ່ງໂດຍບໍ່ໄດ້ຮັບການອະນຸຍາດ

ຖ້ອຍຄຳເປົ່າໆທຸກຄຳທີ່ມະນຸດເວົ້າເຂົາຈະຕ້ອງຮັບຜິດຊອບ ເພາະຄຳນັ້ນໃນວັນພິພາກສາ, **ມທ** 12:36. ໄພ່ພົນຂອງພຣະເຈົ້າຖືກຕັກເຕືອນບໍ່ໃຫ້ເປັນຄົນມັກຢູ່ລ້າທ່ຽວຂຶ້ນເຮືອນນັ້ນເຮືອນນີ້, ເວົ້າຂວັນນິນທາຜູ້ອື່ນ, **1 ຕມທ** 5:11–14.

ຢ່າກ່າວຮ້າຍເພື່ອນບ້ານຂອງພວກເຈົ້າ, **ຄພ** 42:27. ຈົ່ງເພີ່ມຄວາມເຂັ້ມແຂງໃຫ້ແກ່ອ້າຍນ້ອງຂອງເຈົ້າໃນການສົນທະນາທຸກຢ່າງຂອງເຈົ້າ, **ຄພ** 108:7.

**ນີເນເວ.** *ເບິ່ງ* ໂຢນາ; ອັດຊີເຣຍ *ນຳອີກ*

ໃນພຣະຄຳພີເດີມ, ຫົວເມືອງໃຫຍ່ຂອງອັດຊີເຣຍ ແລະ ເປັນເວລາຫລາຍກວ່າສອງຮ້ອຍປີ ເປັນສູນການຄ້າຢູ່ແຄມແມ່ນ້ຳເບື້ອງຕາເວັນອອກຕີກຣິດ. ມັນເສື່ອມໂຊມລົງຕອນຈັກກະພົບອັດຊີເຣຍຕົກໄປ, 606 ປີ ກ່ອນ ຄ.ສ.

ເຊັນນາເກຣິບ, ກະສັດຂອງອັດຊີເຣຍ, ໄດ້ອາໄສຢູ່ເມືອງນີເນເວ, **2 ກສ** 19:36. ໂຢນາໄດ້ຖືກສົ່ງໄປເອີ້ນໃຫ້ຜູ້ຄົນໃນເມືອງກັບໃຈ, **ຢນ** 1:1–2 (ຢນ 3:1–4). ຜູ້ຄົນໃນເມືອງນີເນເວໄດ້ກັບໃຈ, **ຢນ** 3:5–10.

ພຣະຄຣິດໄດ້ໃຊ້ເມືອງນີເນເວເປັນຕົວຢ່າງເລື່ອງການກັບໃຈຢູ່ຕໍ່ໜ້າຊາວຢິວ, **ມທ** 12:41.

**ນີໂກເດມ.** *ເບິ່ງ* ຟາຣີຊາຍ *ນຳອີກ*

ໃນພຣະຄຳພີໃໝ່, ຜູ້ປົກຄອງທີ່ຊອບທຳຂອງຊາວຢິວ (ບາງທີແຫ່ງຊານເຮດຣິນ) ແລະ ຟາຣີຊາຍ (ຢຮ 3:1).

ເພິ່ນໄດ້ກ່າວກັບພຣະເຢຊູໃນຕອນກາງຄືນ, **ຢຮ** 3:1–21. ເພິ່ນໄດ້ປົກປ້ອງພຣະຄຣິດກັບພວກຟາຣີຊາຍ, **ຢຮ** 7:50–53. ເພິ່ນໄດ້

ນຳເຄື່ອງຫອມໄປຍັງບ່ອນຝັງພຣະເຢຊູ, **ຢຮ** 19:39–40.

**ນີໄຟ, ລູກຊາຍຂອງນີໄຟ, ລູກຊາຍຂອງຮີລາມັນ.** *ເບິ່ງ* ສານຸສິດ; ນີໄຟ, ລູກຊາຍຂອງຮີລາມັນ *ນຳອີກ*

ສານຸສິດຄົນໜຶ່ງໃນສິບສອງຄົນ ຊຶ່ງພຣະເຢຊູຄຣິດທີ່ໄດ້ຟື້ນຄືນພຣະຊົນ ເລືອກໄວ້ ໃນພຣະຄຳພີມໍມອນ (3 ນຟ 1:2–3; 19:4). ສາດສະດາຜູ້ນີ້ໄດ້ອະທິຖານຢ່າງແຮງກ້າຫາພຣະຜູ້ເປັນເຈົ້າ ແທນຜູ້ຄົນຂອງເພິ່ນ. ນີໄຟ ໄດ້ຍິນສຸລະສຽງຂອງພຣະຜູ້ເປັນເຈົ້າ (3 ນຟ 1:11–14). ທູດກໍໄດ້ມາຢ້ຽມຢາມນີໄຟຄືກັນ, ເພິ່ນໄດ້ໄລ່ຜີມານອອກໄປ, ໄດ້ນຳນ້ອງຊາຍຂອງເພິ່ນຄືນມາມີຊີວິດ, ແລະ ໄດ້ສະແດງປະຈັກພະຍານທີ່ບໍ່ສາມາດປະຕິເສດໄດ້ (3 ນຟ 7:15–19; 19:4). ນີໄຟໄດ້ຮັກສາບັນທຶກພຣະຄຳພີ (3 ນຟ 1:2–3).

*ໜັງສືນີໄຟສະບັບທີສາມ:* ໜັງສືທີ່ຂຽນໂດຍນີໄຟ, ລູກຊາຍຂອງນີໄຟ, ໃນພຣະຄຳພີມໍມອນ. ບົດທີ 1–10 ສະແດງໃຫ້ເຫັນຄຳທຳນາຍທີ່ໄດ້ເກີດເປັນຈິງກ່ຽວກັບການສະເດັດມາຂອງພຣະຜູ້ເປັນເຈົ້າ. ເຄື່ອງໝາຍກ່ຽວກັບການກຳເນີດຂອງພຣະຄຣິດ ໄດ້ຖືກບອກໄວ້; ຜູ້ຄົນໄດ້ກັບໃຈ; ແຕ່ຈາກນັ້ນພວກເຂົາໄດ້ຫັນໄປເປັນຄົນຊົ່ວ. ໃນທີ່ສຸດ ພະຍຸຝົນຟ້າຄະນອງ, ແຜ່ນດິນໄຫວ, ຝົນຕົກຟ້າລົມທີ່ໂຫດຮ້າຍ, ແລະ ຄວາມພິນາດອັນຍິ່ງໃຫຍ່ ໄດ້ເປັນເຄື່ອງໝາຍເຖິງການສິ້ນພຣະຊົນຂອງພຣະຄຣິດ. ບົດທີ 11–28 ບັນທຶກເຖິງການສະເດັດມາອາເມຣິກາຂອງພຣະຄຣິດ. ນີ້ຄືພາກສ່ວນສຳຄັນຂອງໜັງສືນີໄຟສະບັບທີສາມ. ພຣະຄຳຂອງພຣະຄຣິດຫລາຍຄຳ ແມ່ນຄ້າຍຄືກັນກັບຄຳເທດສະໜາຂອງພຣະອົງ ທີ່ມີບັນທຶກໄວ້ຢູ່ໃນພຣະຄຣິສຕະທຳຄຳພີ (ຍົກຕົວຢ່າງ, ມທ 5–7 ແລະ 3 ນຟ 12–14). ບົດທີ 29–30 ແມ່ນຄຳຂອງມໍມອນຕໍ່ປະຊາຊາດຍຸກສຸດທ້າຍ.

*ໜັງສືນີໄຟສະບັບທີສີ່:* ໜັງສືເຫລັ້ມນີ້ມີພຽງແຕ່ສີ່ສິບເກົ້າຂໍ້, ທັງໝົດຢູ່ໃນບົດດຽວ, ແຕ່ມັນລວມເຖິງສາມຮ້ອຍປີຂອງປະຫວັດສາດຂອງຊາວນີໄຟ (ຄ.ສ. 34–321). ຜູ້ຂຽນຫລາຍລຸ້ນຄົນ, ລວມທັງນີໄຟ, ໄດ້ຊ່ວຍຂຽນເລື່ອງລາວໃສ່ໃນບັນທຶກນີ້ ຂໍ້ 1–19 ບອກວ່າຫລັງຈາກທີ່ພຣະຄຣິດທີ່ໄດ້ຟື້ນຄືນພຣະຊົນ ໄດ້ໄປຢ້ຽມຢາມ, ຊາວນີໄຟ ແລະ ຊາວເລມັນໄດ້ປ່ຽນໃຈເຫລື້ອມໃສພຣະກິດຕິຄຸນ. ສັນຕິສຸກ, ຄວາມຮັກ, ແລະ ຄວາມຖືກຕ້ອງປອງດອງມີຢູ່ທົ່ວໄປ. ສານຸສິດຊາວນີໄຟສາມຄົນ, ຜູ້ຊຶ່ງພຣະຄຣິດໄດ້ອະນຸຍາດໃຫ້ມີຊີວິດຢູ່ຕໍ່ໄປເທິງແຜ່ນດິນໂລກ ຈົນເຖິງການສະເດັດມາຄັ້ງທີສອງຂອງພຣະອົງ (3 ນຟ 28:4–9), ໄດ້ປະຕິບັດຕໍ່ຜູ້ຄົນ. ນີໄຟໄດ້ປະບັນທຶກໄວ້ນຳອາໂມດ ລູກຊາຍຂອງເພິ່ນ. ຂໍ້ 19–47 ແມ່ນບັນທຶກການປະຕິບັດສາດສະໜາກິດຂອງອາໂມ (84 ປີ) ແລະ ກ່ຽວກັບອາໂມ ລູກຊາຍຂອງເພິ່ນ (112 ປີ). ໃນ ຄ.ສ. 201, ຄວາມຈອງຫອງໄດ້ເລີ່ມຕົ້ນສ້າງບັນຫາໃນບັນດາຜູ້ຄົນ, ຜູ້ໄດ້ແຍກຊັ້ນວັນນະ ແລະ ເລີ່ມຕົ້ນສາດສະໜາຈັກປອມຂຶ້ນເພື່ອຫາລາຍໄດ້ (4 ນຟ 1:24–34).

ຂໍ້ສຸດທ້າຍຂອງໜັງສືນີໄຟສະບັບທີສີ່ສະແດງວ່າ ຜູ້ຄົນໄດ້ຫັນໄປເຮັດຄວາມຊົ່ວຮ້າຍອີກ (4 ນຟ 1:35–49). ໃນ ຄ.ສ. 305, ອາໂມ ລູກຊາຍຂອງອາໂມໄດ້ຕາຍໄປ ແລະ ນ້ອງຊາຍຂອງລາວຊື່ອາມມາຣອນ ໄດ້ເຊື່ອງແຜ່ນຈາລຶກທັງໝົດໄວ້ເພື່ອຄວາມປອດໄພ. ຕໍ່ມາອາມມາຣອນໄດ້ມອບບັນທຶກໃຫ້ແກ່ມໍມອນ, ຜູ້ໄດ້ບັນທຶກເຫດການຕ່າງໆທີ່ເກີດຂຶ້ນໃນວັນເວລາຂອງເພິ່ນໄວ້ ແລະ ຈາກນັ້ນໄດ້ຫຍໍ້ມັນເຂົ້າກັນ (ມມ 1:2–4).

**ນີໄຟ, ລູກຊາຍຂອງລີໄຮ.** *ເບິ່ງ* ຊາວນີໄຟ; ລີໄຮ, ບິດາຂອງນີໄຟ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍທີ່ຊອບທຳຂອງລີໄຮກັບນາງຊາໄຣຢາ (1 ນຟ 1:1–4; 2:5). ນີໄຟມີສັດທາອັນແຮງກ້າໃນພຣະຄຳຂອງພຣະເຈົ້າ (1 ນຟ 3:7) ແລະ ກາຍເປັນສາດສະດາທີ່ຍິ່ງໃຫຍ່, ເປັນຜູ້ຮັກສາບັນທຶກ, ແລະ ຜູ້ນຳຂອງຜູ້ຄົນຂອງເພິ່ນ.

ເປັນຄົນເຊື່ອຟັງ ແລະ ໄດ້ອະທິຖານດ້ວຍສັດທາ, **1 ນຟ** 2:16. ໄດ້ກັບຄືນໄປເຢຣູຊາເລັມ

ເພື່ອໄປເອົາແຜ່ນຈາລຶກທອງເຫລືອງ, **1 ນຟ** 3–4. ໄດ້ກັບຄືນໄປເຢຣູຊາເລັມ ເພື່ອໄປນຳເອົາຄອບຄົວຂອງອິດຊະມາເອນ ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ, **1 ນຟ** 7. ໄດ້ຮັບພາບນິມິດແບບດຽວກັນກັບທີ່ລີໄຮໄດ້ຮັບ, **1 ນຟ** 10:17–22; 11. ໄດ້ເຫັນອະນາຄົດຂອງຜູ້ຄົນຂອງເພິ່ນ ແລະ ການຟື້ນຟູພຣະກິດຕິຄຸນໃນພາບນິມິດ, **1 ນຟ** 12–13. ໄດ້ແປຄວາມໝາຍຂອງພາບນິມິດກ່ຽວກັບຕົ້ນໄມ້ແຫ່ງຊີວິດ, **1 ນຟ** 15:21–36. ໄດ້ເຮັດຄັນທະນູຫັກ ແຕ່ຜ່ານສັດທາ ຈຶ່ງໄດ້ຫາອາຫານມາໄດ້, **1 ນຟ** 16:18–32. ໄດ້ສ້າງເຮືອໃຫຍ່ ແລະ ໄດ້ເດີນທາງໄປຫາແຜ່ນດິນແຫ່ງຄຳສັນຍາ, **1 ນຟ** 17–18. ຊາວນີໄຟ ແລະ ຊາວເລມັນໄດ້ແຍກອອກຈາກກັນ, **2 ນຟ** 5. ໄດ້ສະແດງປະຈັກພະຍານເປັນຄັ້ງສຸດທ້າຍ, **2 ນຟ** 33.

*ໜັງສືນີໄຟສະບັບທີໜຶ່ງ:* ບົດທີ 1 ເຖິງ 18:8 ສ່ວນຫລາຍແລ້ວແມ່ນກ່ຽວກັບສາດສະດາລີໄຮ ແລະ ຄອບຄົວຂອງເພິ່ນ ທີ່ໜີຈາກເຢຣູຊາເລັມ. ເຂົາເຈົ້າໄດ້ເດີນທາງຜ່ານຖິ່ນແຫ້ງແລ້ງກັນດານທີ່ແຫ້ງແລ້ງ ຈົນກວ່າເຂົາເຈົ້າໄດ້ໄປເຖິງທະເລ. 1 ນຟ 18:9–23 ບອກເຖິງການເດີນທາງຂອງເຂົາເຈົ້າໄປຫາແຜ່ນດິນແຫ່ງຄຳສັນຍາ, ຕາມການຊີ້ນຳຂອງພຣະຜູ້ເປັນເຈົ້າ, ເຖິງແມ່ນເລມັນກັບເລມູເອນໄດ້ກໍ່ການກະບົດກໍຕາມ. ບົດທີ 19–22 ບອກເຖິງຈຸດປະສົງຂອງນີໄຟ ກ່ຽວກັບການຮັກສາບັນທຶກ (1 ນຟ 6; 19:18)—ເພື່ອຊັກຊວນທຸກຄົນໃຫ້ລະນຶກເຖິງ ພຣະຜູ້ເປັນເຈົ້າ ພຣະຜູ້ໄຖ່ຂອງພວກເຂົາ. ເພິ່ນໄດ້ອ້າງເຖິງເອຊາຢາ (1 ນຟ 20–21) ແລະ ໄດ້ແປຄວາມໝາຍຂ່າວສານຂອງເອຊາຢາ, ດ້ວຍຄວາມຫວັງທີ່ຈະໃຫ້ທຸກຄົນມາຮູ້ຈັກພຣະເຢຊູຄຣິດ ວ່າເປັນ ພຣະຜູ້ຊ່ວຍໃຫ້ລອດ ແລະ ພຣະຜູ້ໄຖ່ຂອງພວກເຂົາ (1 ນຟ 22:12).

*ໜັງສືນີໄຟສະບັບທີສອງ:* ບົດທີ 1–4 ບັນຈຸຄຳສອນສຸດທ້າຍຂອງລີໄຮ ແລະ ຄຳທຳນາຍກ່ອນເພິ່ນເສຍຊີວິດໄປ, ລວມທັງພອນທີ່ເພິ່ນໄດ້ມອບໃຫ້ແກ່ລູກຊາຍ ແລະ ຜູ້ສືບຕະກຸນຂອງເພິ່ນ. ບົດທີ 5 ອະທິບາຍວ່າເປັນຫຍັງຊາວນີໄຟຈຶ່ງແຍກຕົວອອກຈາກຊາວເລມັນ. ຊາວນີໄຟໄດ້ສ້າງພຣະວິຫານ, ໄດ້ສອນກົດຂອງໂມເຊ, ແລະ ຮັກສາບັນທຶກ. ບົດທີ 6–10 ບັນຈຸຄຳຂອງຢາໂຄບ, ນ້ອງຊາຍຂອງນີໄຟ. ຢາໂຄບໄດ້ທົບທວນປະຫວັດສາດຂອງຢູດາ ແລະ ໄດ້ທຳນາຍກ່ຽວກັບພຣະເມຊີອາ, ຊຶ່ງບາງສ່ວນໄດ້ຖືກເອົາອອກມາຈາກການຂຽນຂອງສາດສະດາ ເອຊາຢາ. ໃນ ບົດທີ 11–33 ນີໄຟໄດ້ບັນທຶກປະຈັກພະຍານຂອງເພິ່ນເຖິງພຣະຄຣິດ, ປະຈັກພະຍານຂອງຢາໂຄບ, ຄຳທຳນາຍກ່ຽວກັບຍຸກສຸດທ້າຍ, ແລະ ຫລາຍບົດຈາກພຣະທຳເອຊາຢາໃນພຣະຄຳພີເດີມ.

*ແຜ່ນຈາລຶກຂອງນີໄຟ: ເບິ່ງ*

ແຜ່ນຈາລຶກ**ນີໄຟ, ລູກຊາຍຂອງຮີລາມັນ.** *ເບິ່ງ* ລີໄຮ, ຜູ້ສອນສາດສະໜາຊາວນີໄຟ; ຮີລາມັນ, ລູກຊາຍຂອງຮີລາມັນ *ບຳອິກ*

ໃນພຣະຄຳພີມໍມອນ, ສາດສະດາ ແລະ ຜູ້ສອນສາດສະໜາຊາວນີໄຟທີ່ຍິ່ງໃຫຍ່.

ເປັນລູກຊາຍກົກຂອງຮີລາມັນ, **ຮລມ** 3:21. ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າຜູ້ຕັດສິນ, **ຮລມ** 3:37. ເພິ່ນກັບລີໄຮນ້ອງຊາຍຂອງເພິ່ນໄດ້ຊ່ວຍໃຫ້ຊາວເລມັນຫລາຍຄົນປ່ຽນໃຈເຫລື້ອມໃສພຣະກິດຕິຄຸນ, **ຮລມ** 5:18–19. ໄດ້ຖືກອ້ອມໄວ້ດ້ວຍໄຟ ແລະ ຖືກປ່ອຍອອກຈາກຄຸກ, **ຮລມ** 5:20–52. ໄດ້ອະທິຖານຢູ່ເທິງຫໍສູງຢູ່ໃນສວນຂອງເພິ່ນ, **ຮລມ** 7:6–10. ໄດ້ເປີດເຜີຍການລອບຂ້າຫົວໜ້າຜູ້ຕັດສິນ, **ຮລມ** 8:25–28; 9:1–38. ໄດ້ຮັບອຳນາດອັນຍິ່ງໃຫຍ່ຈາກພຣະຜູ້ເປັນເຈົ້າ, **ຮລມ** 10:3–11. ໄດ້ທູນຂໍໃຫ້ພຣະຜູ້ເປັນເຈົ້າສົ່ງຄວາມອຶດຢາກມາ ແລະ ຂໍໃຫ້ພຣະອົງຢຸດຄວາມອຶດຢາກ, **ຮລມ** 11:3–18.

**ນີຮໍ.** *ເບິ່ງ* ຜູ້ຕໍ່ຕ້ານພຣະຄຣິດ; ການຫລອກລວງຂອງປະໂລຫິດ *ບຳອິກ*

ຊາຍທີ່ຊົ່ວຮ້າຍໃນພຣະຄຳພີມໍມອນ. ນີຮໍເປັນຄົນທຳອິດທີ່ໃຊ້ອຳນາດຈອມປອມໃນບັນດາຊາວນີໄຟ. ຫລັງຈາກໄດ້ສອນຄຳສອນທີ່ຜິດ ແລະ ໄດ້ຂ້າກີເດໂອນແລ້ວ, ນີຮໍກໍໄດ້ຖືກປະຫານເພາະການຄາດຕະກຳຂອງລາວ (ແອວ 1). ຜູ້ທີ່ຕິດຕາມນີຮໍ ໄດ້ສືບຕໍ່ປະຕິບັດ

ແລະ ເຮັດຕາມຄຳສອນທີ່ຊົ່ວຮ້າຍຂອງລາວເປັນເວລາດົນນານຫລັງຈາກນີຮໍໄດ້ຕາຍໄປ.

ແອວມາ ແລະ ແອມມິວເລັກໄດ້ຖືກຄຸມຂັງໂດຍຜູ້ຕັດສິນ ຕາມລະບຽບຂອງນີຮໍ, **ແອວ** 14:14–18. ຄົນເຫລົ່ານັ້ນມີອາຊີບດຽວກັນກັບນີຮໍຜູ້ຖືກຂ້າຕາຍ, **ແອວ** 16:11. ຫລາຍຄົນຖືລະບຽບຂອງຊາວນີຮໍ, **ແອວ** 21:4. ຜູ້ຄົນເປັນຈຳນວນຫລວງຫລາຍຜູ້ທີ່ໄດ້ຂ້າພີ່ນ້ອງຂອງພວກເຂົາ ເຮັດຕາມລະບຽບຂອງຊາວນີຮໍ, **ແອວ** 24:28.

**ເນັບທະລີ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ລູກຊາຍຄົນທີຫົກໃນບັນດາພວກລູກຊາຍສິບສອງຄົນຂອງຢາໂຄບ ແລະ ເປັນລູກຊາຍຄົນທີສອງຂອງນາງບິນຮາ, ສາວໃຊ້ຂອງນາງຣາເຊັນ (ປຖກ 30:7–8). ເນັບທະລີມີລູກຊາຍສີ່ຄົນ (1 ຂຄ 7:13).

*ເຜົ່າຂອງເນັບທະລີ:* ພອນຂອງຢາໂຄບທີ່ມອບໃຫ້ເນັບທະລີ ມີບັນທຶກໄວ້ໃນປະຖົມມະການ 49:21. ພອນຂອງໂມເຊທີ່ມອບໃຫ້ເຜົ່າໄດ້ຖືກບັນທຶກໄວ້ໃນ ພຣະບັນຍັດສອງ 33:23.

**ເນບູກາດເນັດສາ.** *ເບິ່ງ* ດານີເອນ; ບາເບນ, ບາບີໂລນ *ນຳອີກ*

ໃນພຣະຄຳພີເດີມ, ກະສັດຂອງບາບີໂລນ (604–561 ປີ ກ່ອນ ຄ.ສ.) ຜູ້ໄດ້ປາບຢູດາ (2 ກສ 24:1–4) ແລະ ໄດ້ປິດລ້ອມເມືອງເຢຣູຊາເລັມ (2 ກສ 24:10–11). ສາດສະດາລີໄຮໄດ້ຖືກສັ່ງໃຫ້ໜີຈາກເຢຣູຊາເລັມ ປະມານ 600 ປີ ກ່ອນ ຄ.ສ. ເພື່ອຫລີກເວັ້ນຈາກການຖືກຈັບໄປບາບີໂລນ (1 ນຟ 1:4–13) ຕອນເນບູກາດເນັດສາພາກະສັດເຊເດກີຢາ ແລະ ຜູ້ຄົນໄປ (2 ກສ 25:1, 8–16, 20–22). ດານີເອນໄດ້ແປຄວາມຝັນຂອງເນບູກາດເນັດສາ (ດນອ 2; 4).

**ເນເຫມີຢາ**

ຊາຍຜູ້ມີກຽດຊາວອິດສະຣາເອນໃນບາບີໂລນ ຢູ່ໃນພຣະຄຳພີເດີມ (ອາດເປັນຊາວເລວີ ຫລື ເຜົ່າຂອງຢູດາ) ຜູ້ມີຕຳແໜ່ງເປັນຜູ້ລໍຮັບໃຊ້ ຢູ່ໃນວັງຂອງອາກຕາເຊເຊັດ, ຊຶ່ງໂດຍການນີ້ ລາວຈຶ່ງໄດ້ຮັບອະນຸຍາດໃຫ້ສ້ອມແປງກຳແພງເມືອງເຢຣູຊາເລັມຄືນໃໝ່.

*ພຣະທຳເນເຫມີຢາ:* ໜັງສືເຫລັ້ມນີ້ບັນຈຸເລື່ອງລາວທີ່ຕໍ່ເນື່ອງຈາກພຣະທຳເອຊະຣາ. ມັນບັນຈຸເລື່ອງລາວກ່ຽວກັບຄວາມກ້າວໜ້າ ແລະ ຄວາມຫຍຸ້ງຍາກຂອງວຽກງານທີ່ເຢຣູຊາເລັມ ຫລັງຈາກທີ່ຊາວຢິວໄດ້ກັບມາຈາກການເປັນຊະເລີຍທີ່ບາບີໂລນ. ບົດທີ 1–7 ບອກເຖິງການຢ້ຽມຢາມເຢຣູຊາເລັມເທື່ອທຳອິດຂອງເນເຫມີຢາ ແລະ ການສ້ອມແປງກຳແພງຄືນໃໝ່, ເຖິງແມ່ນຈະປະເຊີນກັບການກີດກັນອັນໃຫຍ່ຫລວງກໍຕາມ. ບົດທີ 8–10 ບັນຍາຍກ່ຽວກັບການປະຕິຮູບທາງສາດສະໜາ ແລະ ທາງສັງຄົມ ທີ່ເນເຫມີຢາໄດ້ພະຍາຍາມດຳເນີນການ. ບົດທີ 11–13 ບອກລາຍຊື່ຂອງຄົນທີ່ມີຄ່າຄວນ ແລະ ໃຫ້ເລື່ອງລາວກ່ຽວກັບການອຸທິດກຳແພງ. ຂໍ້ 4–31 ຂອງ ບົດທີ 13 ບັນທຶກການຢ້ຽມຢາມເຢຣູຊາເລັມເທື່ອທີສອງຂອງເນເຫມີຢາ ຫລັງຈາກໄດ້ຈາກໄປເປັນເວລາສິບສອງປີ.

**ແນະນຳ**

ດັ່ງທີ່ໃຊ້ຢູ່ໃນພຣະຄຳພີ, ແນະນຳໝາຍເຖິງການແນະນຳ ຫລື ສອນ.

ເຮົາຈຶ່ງແນະນຳເຈົ້າໃຫ້ຊື້ຄຳທີ່ຫລອມບໍລິສຸດແລ້ວ, **ພນມ** 3:18.

ຢ່າໄດ້ພະຍາຍາມແນະນຳພຣະຜູ້ເປັນເຈົ້າ, **ຢຄ** 4:10. ພຣະອົງໄດ້ແນະນຳດ້ວຍຄວາມສະຫລຽວສະຫລາດ ໃນວຽກງານທັງໝົດຂອງພຣະອົງ, **ແອວ** 37:12.

ບາບຂອງພວກເຈົ້າໄດ້ຂຶ້ນມາຫາເຮົາ ເພາະພວກເຈົ້າສະແຫວງຫາຄຳແນະນຳໃນວິທີທາງຂອງພວກເຈົ້າເອງ, **ຄພ** 56:14.

**ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ.** *ເບິ່ງ* ຄັບຣີເອນ; ນ້ຳຖ້ວມໃນວັນເວລາຂອງໂນອາ; ຮຸ້ງກິນນ້ຳ; ເຮືອໃຫຍ່ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງລາເມັກ ແລະ ປິຕຸຄົນທີສິບນັບຈາກອາດາມ (ປຖກ

5:29–32). ເພິ່ນ ໄດ້ ເປັນ ພະຍານ ເຖິງ ພຣະ ຄຣິດ ແລະ ໄດ້ສັ່ງສອນການ ກັບໃຈ ແກ່ ຄົນ ລຸ້ນທີ່ຊົ່ວຮ້າຍ. ເມື່ອຜູ້ຄົນປະຕິເສດ ຂ່າວສານ ຂອງເພິ່ນ, ພຣະເຈົ້າຈຶ່ງໄດ້ບັນຊາເພິ່ນໃຫ້ສ້າງ ເຮືອໃຫຍ່ໃຫ້ແກ່ຄອບຄົວຂອງເພິ່ນ ແລະ ສຳ ລັບສັດທັງຫລາຍ ເມື່ອແຜ່ນດິນໂລກຖືກນ້ຳ ຖ້ວມ ເພື່ອທຳລາຍ ຄົນຊົ່ວ (ປຖກ 6:13–22; ມຊ 8:16–30). ສາດສະດາໂຈເຊັບ ສະມິດ ໄດ້ ສອນວ່າ ໂນອາຄືທູດຄັບຣິເອນ ແລະ ຢືນຢູ່ຖັດ ຂ້າງອາດາມ ດຳລົງຂໍກະແຈແຫ່ງຄວາມລອດ.

ເພິ່ນກັບລູກຊາຍຂອງເພິ່ນຊື່ຢາເຟດ, ເຊມ, ແລະ ຮາມ, ແລະ ເມຍຂອງເຂົາເຈົ້າໄດ້ຖືກ ຊ່ວຍຊີວິດໄວ້ ເມື່ອເຂົາເຈົ້າໄດ້ສ້າງເຮືອໃຫຍ່ ຕາມຄຳສັ່ງຂອງພຣະເຈົ້າ, **ປຖກ** 6–8 (ຮຣ 11:7; 1 ປຕ 3:20). ພຣະຜູ້ເປັນເຈົ້າໄດ້ຕໍ່ ພັນທະສັນຍາທີ່ພຣະອົງໄດ້ເຮັດໄວ້ກັບເອນົກ ແລະ ໂນອາ, **ປຖກ** 9:1–17 (ປຈສ, ປຖກ 9:15, 21–25; ມຊ 7:49–52).

ໂນອາໄດ້ຖືກແຕ່ງຕັ້ງຕໍ່ຖານະປະໂລຫິດ ໂດຍເມທູເຊລາຕອນເພິ່ນມີອາຍຸໄດ້ສິບປີ, **ຄພ** 107:52.

ຜູ້ຄົນ ໄດ້ພະຍາຍາມເອົາຊີວິດຂອງເພິ່ນ, ແຕ່ອຳນາດ ຂອງ ພຣະ ເຈົ້າ ໄດ້ ຮັກສາຊີວິດ ຂອງເພິ່ນໄວ້, **ມຊ** 8:18. ເພິ່ນໄດ້ກາຍເປັນຜູ້ ສັ່ງສອນເລື່ອງຄວາມຊອບທຳ ແລະ ໄດ້ສອນ ພຣະກິດຕິຄຸນຂອງພຣະເຢຊູຄຣິດ, **ມຊ** 8:19, 23–24 (2 ປຕ 2:5).

**ໂນອາ, ລູກຊາຍຂອງຊີນິບ**

ກະສັດທີ່ຊົ່ວຮ້າຍໃນພຣະຄຳພີມໍມອນ. ລາວ ໄດ້ປົກຄອງຊາວນີໄຟກຸ່ມໜຶ່ງໃນແຜ່ນດິນນີໄຟ.

ໂນອາໄດ້ເຮັດການບາບຫລາຍຢ່າງ, **ມຊຢ** 11:1–15. ໂນອາ ໄດ້ສັ່ງປະຫານຊີວິດສາດ ສະດາອະບີນາໄດ, **ມຊຢ** 13:1 (ມຊຢ 17:1, 5–20). ໂນອາໄດ້ຖືກເຜົາທັງເປັນ, **ມຊຢ** 19:20.

**ເນື້ອໜັງ.** *ເບິ່ງ* ການມະລົນ; ມະຕະ, ຄວາມ ເປັນມະຕະ; ມະນຸດທີ່ມີຈິດໃຈທຳມະດາ; ຮ່າງກາຍ *ນຳອີກ*

ເນື້ອໜັງມີຄວາມໝາຍຫລາຍຢ່າງ: (1) ເນື້ອ ໜັງອ່ອນໆປະກອບເປັນຮ່າງກາຍຂອງມະນຸດ ຊາດ, ສັດ, ຝູງນົກ, ຫລື ປາ; (2) ຄວາມເປັນ ມະຕະ; ຫລື (3) ທຳມະຊາດທາງຮ່າງກາຍ ຫລື ການມະລົນຂອງມະນຸດ.

*ຜິວໜັງຂອງຮ່າງກາຍ:* ສັດຈະເປັນອາຫານ ສຳລັບເຈົ້າ, **ປຖກ** 9:3. ບໍ່ຄວນຂ້າສັດແບບບໍ່ ຈຳເປັນ, **ປຈສ, ປຖກ** 9:10–11 (ຄພ 49:21).

ຝູງສັດ ແລະ ຝູງນົກ ແມ່ນສຳລັບມະນຸດ ທີ່ຈະກິນ ແລະ ໃຊ້ເປັນເຄື່ອງນຸ່ງຫົ່ມ, **ຄພ** 49:18–19 (ຄພ 59:16–20). ເຮົາຄວນກິນຊີ້ນ ພຽງເລັກໜ້ອຍ, **ຄພ** 89:12–15.

*ຄວາມເປັນມະຕະ:* ພຣະເຢຊູເປັນພຣະບຸດ ອົງດຽວຂອງພຣະບິດາໃນຄວາມເປັນມະຕະ, **ຢຮ** 1:14 (ມຊຢ 15:1–3).

ອາດາມໄດ້ກາຍເປັນຜູ້ຊາຍຄົນທຳອິດ, **ມຊ** 3:7.

*ການມະລົນທຳມະຊາດຂອງມະນຸດ:* ຄຳ ສາບແຊ່ງຈະມາສູ່ຜູ້ທີ່ວາງໃຈໃນກຳລັງຂອງ ຕົນ, **ຢມຢ** 17:5.

ຈິດໃຈພ້ອມຢູ່ແລ້ວກໍຈິງແຕ່ຮ່າງກາຍກໍອ່ອນ ແຮງ, **ມຣກ** 14:38. ຕັນຫາຂອງເນື້ອກາຍບໍ່ໄດ້ ເກີດມາຈາກພຣະບິດາ, **1 ຢຮ** 2:16.

ນີໄຟ ເສົ້າສະຫລົດເພາະເນື້ອໜັງ ແລະ ຄວາມຊົ່ວຮ້າຍຂອງລາວ, **2 ນຟ** 4:17–18, 34. ຢ່າທຳຕົນເອງໃຫ້ເຂົ້າກັບມານ ແລະ ເນື້ອໜັງ, **2 ນຟ** 10:24.

**ນົກເຂົາ, ເຄື່ອງໝາຍຂອງ.** *ເບິ່ງ* ພຣະວິນ ຍານບໍລິສຸດ *ນຳອີກ*

ເຄື່ອງໝາຍທີ່ຈັດໄວ້ແລ້ວ ອັນທີ່ໂຢຮັນບັບຕິ ສະໂຕ ຈະຮູ້ຈັກພຣະເມຊີອາໄດ້ (ຢຮ 1:32–34). ໂຈເຊັບ ສະມິດ ໄດ້ສິດສອນວ່າເຄື່ອງ ໝາຍເປັນຮູບນົກເຂົາໄດ້ຖືກແຕ່ງຕັ້ງໄວ້ກ່ອນ ການສ້າງໂລກເພື່ອເປັນພະຍານ ສຳລັບພຣະ ວິນຍານບໍລິສຸດ; ສະນັ້ນ, ມານຈຶ່ງບໍ່ສາມາດ ມາໃນຮູບຂອງນົກເຂົາ.

ພຣະວິນຍານຂອງພຣະເຈົ້າເໝືອນດັ່ງນົກ ເຂົາລົງມາ, **ມທ** 3:16.

ຫລັງຈາກພຣະເຢຊູໄດ້ຮັບບັບຕິສະມາ,

ພຣະວິນຍານບໍລິສຸດໄດ້ສະເດັດລົງມາເທິງພຣະອົງເປັນໂຕນົກເຂົາ, **1 ນຟ** 11:27.

ຂ້າພະເຈົ້າ, ໂຢຮັນ, ເປັນພະຍານ, ແລະ ເບິ່ງແມ, ຟ້າສະຫວັນໄດ້ເປີດອອກ, ແລະ ພຣະວິນຍານບໍລິສຸດໄດ້ສະເດັດລົງມາເທິງພຣະອົງເປັນຮູບນົກເຂົາ, **ຄພ** 93:15.

**ນ້ຳຖ້ວມໃນວັນເວລາຂອງໂນອາ.** *ເບິ່ງ* ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ; ຮຸ້ງກິນນ້ຳ; ເຮືອໃຫຍ່ *ນຳອີກ*

ໃນວັນເວລາຂອງໂນອາ ແຜ່ນດິນໂລກໄດ້ຖືກນ້ຳຖ້ວມຈົນໝົດ. ນີ້ຄືການບັບຕິສະມາຂອງແຜ່ນດິນໂລກ ແລະ ເປັນສັນຍາລັກຂອງການຊຳລະລ້າງ (1 ປຕ 3:20–21).

ເຮົາຈະເຮັດໃຫ້ມີນ້ຳຖ້ວມເທິງແຜ່ນດິນໂລກເພື່ອທຳລາຍທຸກສິ່ງທີ່ມີຊີວິດຢູ່, **ປຖກ** 6:17 (ມຊ 7:34, 43, 50–52; 8:17, 30). ນ້ຳໄດ້ຖ້ວມແຜ່ນດິນໂລກ, **ປຖກ** 7:10. ພຣະເຈົ້າໄດ້ຕັ້ງຮຸ້ງກິນນ້ຳໄວ້ໃນທ້ອງຟ້າເພື່ອເປັນເຄື່ອງໝາຍແຫ່ງພັນທະສັນຍາ, **ປຖກ** 9:9–17.

ຫລັງຈາກນ້ຳແຫ້ງລົງ, ແຜ່ນດິນອາເມຣິກາກໍໄດ້ກາຍເປັນແຜ່ນດິນທີ່ປະເສີດເລີດລ້ຳ, **ອທ** 13:2.

ຄົນ ຊົ່ວ ຈະ ຕາຍ ໃນ ນ້ຳ ຖ້ວມ, **ມຊ** 7:38; 8:24.

**ນ້ຳທີ່ປະກອບດ້ວຍຊີວິດ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ເຄື່ອງໝາຍຂອງອົງພຣະເຢຊູຄຣິດເຈົ້າ ແລະ ຄຳສອນຂອງພຣະອົງ. ດັ່ງທີ່ນ້ຳເປັນສິ່ງສຳຄັນທີ່ຄ້ຳຈູນຊີວິດ, ພຣະຜູ້ຊ່ວຍໃຫ້ລອດ ແລະ ຄຳສອນຂອງພຣະອົງ (ນ້ຳທີ່ປະກອບດ້ວຍຊີວິດ) ກໍເປັນສິ່ງສຳຄັນຕໍ່ຊີວິດນິລັນດອນ.

ດັ່ງນ້ຳເຢັນໆຊ່ວຍໃຫ້ຜູ້ຫິວນ້ຳສົດຊື່ນສັນໃດ ຄວາມຊ່ວຍຊູຂອງພຣະອົງກໍໃຫ້ສົດຊື່ນສັນນັ້ນ, **ອຊຢ** 12:3. ເຂົາໄດ້ຫັນໜີໄປຈາກເຮົາ ຜູ້ເປັນບໍ່ນ້ຳພຸທີ່ປະກອບດ້ວຍຊີວິດ, **ຢມຢ** 2:13.

ຜູ້ໃດທີ່ດື່ມນ້ຳ ຊຶ່ງເຮົາຈະໃຫ້ນັ້ນ ຈະບໍ່ຢາກອີກຈັກເທື່ອ, **ຢຮ** 4:6–15. ຖ້າຜູ້ໃດຫິວນ້ຳໃຫ້ມາຫາເຮົາ ແລະ ດື່ມ, **ຢຮ** 7:37.

ຮາວເຫລັກນຳພາໄປຫານ້ຳພຸທີ່ປະກອບດ້ວຍຊີວິດ, **1 ນຟ** 11:25.

ຮັບເອົານ້ຳທີ່ປະກອບດ້ວຍຊີວິດຢ່າງມີອິດສະລະ, **ຄພ** 10:66. ພຣະບັນຍັດຂອງເຮົາຈະເປັນບໍ່ນ້ຳທີ່ປະກອບດ້ວຍຊີວິດ, **ຄພ** 63:23.

**ນ້ຳມັນ.** *ເບິ່ງ* ການປະຕິບັດຕໍ່ຄົນເຈັບປ່ວຍ; ເຈີມ, ການເຈີມ; ໝາກກອກເທດ, ຕົ້ນ *ນຳອີກ*

ຕາມປົກກະຕິແລ້ວ ເມື່ອນ້ຳມັນຖືກກ່າວເຖິງໃນພຣະຄຳພີ ນັ້ນໝາຍເຖິງນ້ຳມັນໝາກກອກ. ຈາກສະໄໝຂອງພຣະຄຳພີເດີມ, ນ້ຳມັນໝາກກອກຖືກໃຊ້ຕາມພິທີການຢູ່ໃນພຣະວິຫານ ແລະ ສະຖານທີ່ນະມັດສະການ, ສຳລັບການເຈີມ, ສຳລັບໄຕ້ຕະກຽງ, ແລະ ສຳລັບອາຫານ. ບາງເທື່ອນ້ຳມັນໝາກກອກເປັນເຄື່ອງໝາຍສຳລັບຄວາມບໍລິສຸດ ແລະ ສຳລັບພຣະວິນຍານທີ່ສັກສິດ ແລະ ອິດທິພົນຂອງມັນ (1 ຊມອ 10:1, 6; 16:13; ອຊຢ 61:1–3).

ພວກປະໂລຫິດຈະທານ້ຳມັນໃສ່ລຸ່ມໃບຫູເບື້ອງຂວາ, **ລລວ** 14:28–29. ຂ້ອຍເປັນຜູ້ທີ່ພຣະຜູ້ເປັນເຈົ້າສົ່ງມາໃຊ້ນ້ຳມັນສັກສິດຫົດສົງເຈົ້າ ໃຫ້ເປັນກະສັດປົກຄອງປະຊາຊົນຂອງພຣະອົງ, **1 ຊມອ** 15:1. ໄຫນ້ຳມັນຂອງແມ່ໝ້າຍບໍ່ເຄີຍຂາດນ້ຳມັນ, **1 ກສ** 17:10–16. ພຣະຜູ້ເປັນເຈົ້າໄດ້ເອົານ້ຳມັນເຈີມຫົວຂອງຂ້າພະເຈົ້າ, **ພສສ** 23:5.

ພວກເພິ່ນໄດ້ເອົານ້ຳມັນຊະໂລມທາຫລາຍຄົນໃຫ້ຫາຍດີພະຍາດ, **ມຣກ** 6:13. ຂໍໃຫ້ຜູ້ເຖົ້າແກ່ອະທິຖານເພື່ອລາວ, ຊະໂລມທາລາວດ້ວຍນ້ຳມັນ, **ຢກບ** 5:13–15.

ຈົ່ງຕັດໄສ້ຕະກຽງຂອງເຈົ້າ ແລະ ໃຫ້ມັນລຸກຢູ່ ແລະ ມີນ້ຳມັນຢູ່ນຳເຈົ້າ, **ຄພ** 33:17 (ມທ 25:1–13).

**ນອນ**

ສະພາບຂອງການພັກຜ່ອນ ທີ່ບຸກຄົນບໍ່ເຄື່ອນໄຫວ ແລະ ບໍ່ຮູ້ເມື່ອຄືງ. ພຣະຜູ້ເປັນເຈົ້າ

ໄດ້ແນະນຳໄພ່ພົນຂອງພຣະອົງ ບໍ່ໃຫ້ນອນຫລາຍກວ່າຈຳເປັນ (ຄພ 88:124). ການນອນກໍຍັງເປັນສັນຍາລັກທາງຄວາມຕາຍທາງວິນຍານນຳອີກ (1 ກຣທ 11:30; 2 ນຟ 1:13) ຫລືຄວາມຕາຍທາງຮ່າງກາຍ (ມມ 9:13).

**ບັງຄັບ, ການບັງຄັບ.** *ເບິ່ງ* ພຣະວິນຍານບໍລິສຸດ *ນຳອີກ*

ການຍຸຍົງຢ່າງແຂງຂັນໃຫ້ເຮັດ ຫລື ບໍ່ໃຫ້ເຮັດບາງສິ່ງ, ໂດຍສະເພາະ ໂດຍອິດທິພົນ ແລະ ອຳນາດຂອງພຣະວິນຍານບໍລິສຸດ.

ຂ້ອຍອັດທົນໄວ້ໄດ້ຍາກເພາະຢາກເວົ້າອອກມາ, **ໂຢບ** 32:18.

ຄວາມຮັກຂອງພຣະຄຣິດກໍບັງຄັບພວກເຮົາຢູ່, **2 ກຣທ** 5:14.

ພຣະວິນຍານກະຕຸ້ນຂ້າພະເຈົ້າໃຫ້ຂ້າລາບານສາ, **1 ນຟ** 4:10. ພຣະວິນຍານໄດ້ກ່າວກັບຂ້າພະເຈົ້າ, **ແອວ** 14:11. ຂ້າພະເຈົ້າມີຄວາມຕັ້ງໃຈທີ່ຈະເຮັດຕາມພັນທະສັນຍາ, **ແອວ** 60:34. ອາມມາຣອນໂດຍຖືກພຣະວິນຍານບໍລິສຸດຊີ້ງນຳໄດ້ເຊື່ອງບັນທຶກທີ່ສັກສິດໄວ້, **4 ນຟ** 1:48.

ສິ່ງທີ່ມາຈາກເບື້ອງເທິງຄວນກ່າວເຖິງໂດຍການບັງຄັບຂອງພຣະວິນຍານ, **ຄພ** 63:64.

**ບັດເຊບາ.** *ເບິ່ງ* ດາວິດ *ນຳອີກ*

ເມຍຂອງອູຣີອາ; ຕໍ່ມາ, ມະເຫສີຂອງດາວິດ ແລະ ມານດາຂອງໂຊໂລໂມນ. ກະສັດດາວິດໄດ້ສົມສູ່ກັບນາງ. ເພິ່ນຍັງໄດ້ສົ່ງຜົວຂອງນາງໄປແນວໜ້າ ເພື່ອຈະໃຫ້ອູຣີຢາຖືກຂ້າຕາຍ (2 ຊມອ 11), ຊຶ່ງບາບນັ້ນ ມີຜົນສະທ້ອນນິລັນດອນສຳລັບດາວິດ (ຄພ 132:39).

**ບັບຕິສະມາ, ໃຫ້ບັບຕິສະມາ.** *ເບິ່ງ* ການບັບຕິສະມາຂອງເດັກແດງທາລົກ; ເກີດໃໝ່, ເກີດຈາກພຣະເຈົ້າ; ພຣະວິນຍານບໍລິສຸດ; ພິທີການ *ນຳອີກ*

ຈາກພາສາກຣີກ ໝາຍເຖິງ "ຈຸ່ມ" ຫລື "ລົງໄປໃນນ້ຳໝົດທັງຕົວ." ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວໂດຍຜູ້ໜຶ່ງທີ່ມີສິດອຳນາດ ເປັນພິທີການເບື້ອງຕົ້ນຂອງພຣະກິດຕິຄຸນ ແລະ ຈຳເປັນຕໍ່ການກາຍເປັນ ສະມາຊິກຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ. ສັດທາໃນພຣະເຢຊູຄຣິດ ແລະ ການກັບໃຈຕ້ອງມາກ່ອນການບັບຕິສະມາ. ມັນຕ້ອງຕິດຕາມໂດຍການຮັບເອົາຂອງປະທານແຫ່ງພຣະວິນຍານບໍລິສຸດ ກ່ອນຈະສົມບູນ (2 ນຟ 31:13–14). ບັບຕິສະມາໂດຍນ້ຳ ແລະ ພຣະວິນຍານ ແມ່ນ ຈຳເປັນສຳລັບບຸກຄົນ ກ່ອນເຂົາຈະສາມາດເຂົ້າໄປໃນອານາຈັກຊັ້ນສູງ. ອາດາມເປັນຜູ້ທຳອິດທີ່ໄດ້ຮັບບັບຕິສະມາ (ມຊ 6:64–65). ພຣະເຢຊູກໍໄດ້ຮັບບັບຕິສະມາຄືກັນ ເພື່ອໃຫ້ສຳເລັດຕາມຄວາມຊອບທຳທຸກຢ່າງ ແລະ ເພື່ອສະແດງວິທີໃຫ້ແກ່ມະນຸດຊາດທັງປວງ (ມທ 3:13–17; 2 ນຟ 31:5–12).

ເພາະວ່າທຸກຄົນຢູ່ເທິງແຜ່ນດິນໂລກບໍ່ມີໂອກາດທີ່ຈະຮັບເອົາພຣະກິດຕິຄຸນຕອນເປັນມະຕະ, ພຣະຜູ້ເປັນເຈົ້າຈຶ່ງໄດ້ອະນຸຍາດໃຫ້ເຮັດພິທີບັບຕິສະມາແທນຄົນທີ່ໄດ້ຕາຍໄປແລ້ວ. ສະນັ້ນ, ຄົນທີ່ຮັບເອົາພຣະກິດຕິຄຸນໃນໂລກວິນຍານຈະເໝາະສົມເພື່ອເຂົ້າໄປໃນອານາຈັກຂອງພຣະເຈົ້າ.

*ຈຳເປັນ:* ຈົ່ງຍອມໃຫ້ເປັນໄປຢ່າງນີ້ສາ ເພື່ອໃຫ້ສຳເລັດຕາມຄວາມຊອບທຳທຸກຢ່າງ, **ມທ** 3:15. ພຣະເຢຊູໄດ້ມາເຖິງ ແລະ ໄດ້ຮັບບັບຕິສະມາຈາກໂຢຮັນ, **ມຣກ** 1:9. ພວກຟາຣີຊາຍ ແລະ ພວກທະນາຍຄວາມທັງຫລາຍໄດ້ຂັດຂວາງພຣະປະສົງຂອງພຣະເຈົ້າ, ໂດຍການບໍ່ຮັບບັບຕິສະມາ, **ລກ** 7:30. ຖ້າຜູ້ໃດບໍ່ບັງເກີດຈາກນ້ຳ ແລະ ຈາກພຣະວິນຍານ, ຜູ້ນັ້ນຈະເຂົ້າໄປໃນອານາຈັກຂອງພຣະເຈົ້າບໍ່ໄດ້, **ຢຮ** 3:5. ແຕ່ລະຄົນໃນພວກທ່ານຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ ແລະ ຮັບບັບຕິສະມາ, **ກຈກ** 2:38.

ພຣະອົງໄດ້ບັນຊາຄົນທັງປວງວ່າ ພວກເຂົາຕ້ອງກັບໃຈ ແລະ ຮັບບັບຕິສະມາໃນພຣະນາມຂອງພຣະອົງ, **2 ນຟ** 9:23–24. ມະນຸດຕ້ອງຕິດຕາມພຣະຄຣິດ, ຮັບບັບຕິສະມາ, ຮັບພຣະວິນຍານບໍລິສຸດ, ແລະ ອົດທົນຈົນເຖິງທີ່ສຸດ ເພື່ອຈະລອດ, **2 ນຟ** 31. ຄຳສອນຂອງ

ພຣະຄຣິດແມ່ນວ່າ ມະນຸດຄວນເຊື່ອ ແລະ ຮັບບັບຕິສະມາ, **3 ນຟ** 11:20–40.

ຄົນທີ່ບໍ່ເຊື່ອຖ້ອຍຄຳຂອງພວກເຈົ້າ, ແລະບໍ່ຮັບບັບຕິສະມາໃນນ້ຳໃນນາມຂອງເຮົາ, ຈະອັບປະໂຫຍດ, **ຄພ** 84:74.

ພຣະເຈົ້າໄດ້ອະທິບາຍຕໍ່ອາດາມວ່າເປັນຫຍັງຈຶ່ງຈຳເປັນຕ້ອງກັບໃຈ ແລະ ຮັບບັບຕິສະມາ, **ມຊ** 6:52–60.

*ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ:* ພຣະເຢຊູ, ເມື່ອພຣະອົງຮັບບັບຕິສະມາແລ້ວ, ພຣະອົງກໍຂຶ້ນຈາກນ້ຳ, **ມທ** 3:16 (ມຣກ 1:10). ໂຢຮັນກໍໃຫ້ຜູ້ຄົນຮັບບັບຕິສະມາທີ່ບ້ານໄອນົນ ເພາະວ່າຢູ່ທີ່ນັ້ນມີນ້ຳຫລາຍ, **ຢຮ** 3:23. ຟີລິບ ແລະ ຂ້າຣາຊການໄດ້ລົງໄປໃນນ້ຳ, **ກຈກ** 8:38. ພວກເຮົາຈຶ່ງໄດ້ຖືກຝັງໄວ້ກັບພຣະອົງດ້ວຍການຮັບບັບຕິສະມາ, **ຣມ** 6:4 (ກລຊ 2:12).

ຕິດຕາມພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງທ່ານລົງໄປໃນນ້ຳ, **2 ນຟ** 31:13. ແອວມາ, ເຮລາມ, ແລະ ຄົນອື່ນໆ ກໍຝັງຕົວຢູ່ໃນນ້ຳ, **ມຊຢ** 18:12–16. ແລະ ຫລັງຈາກນັ້ນໃຫ້ເຈົ້າຈຸ່ມເຂົາລົງໃນນ້ຳ, **3 ນຟ** 11:25–26.

ແບບແຜນທີ່ຖືກຕ້ອງເລື່ອງການບັບຕິສະມາໄດ້ຖືກອະທິບາຍໄວ້, **ຄພ** 20:72–74. ພວກເຂົາຮັບບັບຕິສະມາຕາມວິທີການຝັງຂອງພຣະອົງ, ໂດຍຖືກຝັງໄວ້ໃນນ້ຳໃນພຣະນາມຂອງພຣະອົງ, **ຄພ** 76:50–51.

ອາດາມໄດ້ຖືກວາງໄວ້ໃຕ້ນ້ຳ ແລະ ຖືກນຳຂຶ້ນມາຈາກນ້ຳ, **ມຊ** 6:64. ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, **ຫຼຊ** 1:4.

*ການບັບຕິສະມາເພື່ອການປົດບາບ:* ຈົ່ງລຸກຂຶ້ນຮັບບັບຕິສະມາ ແລະ ຊຳລະບາບກຳຂອງເຈົ້າ, **ກຈກ** 22:16.

ຫລັງຈາກບັບຕິສະມາ ການປົດບາບຂອງພວກທ່ານຈະມາເຖິງໂດຍໄຟ ແລະ ໂດຍພຣະວິນຍານບໍລິສຸດ, **2 ນຟ** 31:17. ຈົ່ງມາເຖີດ ມາຮັບບັບຕິສະມາໄວ້ກັບການກັບໃຈ, ເພື່ອພວກທ່ານຈະຖືກລ້າງຈາກບາບຂອງພວກທ່ານ, **ແອວ** 7:14. ຄົນທີ່ຈະເຊື່ອ ແລະ ຮັບບັບຕິສະມາຍ່ອມເປັນສຸກ, ເພາະວ່າເຂົາຈະໄດ້ຮັບການປົດບາບຂອງຕົນ, **3 ນຟ** 12:1–2.

ຈົ່ງປະກາດການກັບໃຈ ແລະ ສັດທາໃນພຣະຜູ້ຊ່ວຍໃຫ້ລອດ, ແລະ ການປົດບາບໂດຍການບັບຕິສະມາ, **ຄພ** 19:31.

ພວກເຮົາເຊື່ອໃນການບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, **ຫຼຊ** 1:4.

*ສິດອຳນາດທີ່ຖືກຕ້ອງ:* ພວກເຈົ້າຈົ່ງໄປຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ, ໃຫ້ເຂົາຮັບບັບຕິສະມາໃນພຣະນາມຂອງພຣະບິດາ, ຂອງພຣະບຸດ, ແລະ ຂອງພຣະວິນຍານບໍລິສຸດ, **ມທ** 28:19 (ຄພ 68:8).

ກະສັດລິມໄຮກັບຜູ້ຄົນຂອງເພິ່ນເປັນຈຳນວນຫລວງຫລາຍປາດຖະໜາທີ່ຈະຮັບບັບຕິສະມາ; ແຕ່ວ່າບໍ່ມີຜູ້ໃດໃນແຜ່ນດິນມີສິດອຳນາດຈາກພຣະເຈົ້າ, **ມຊຢ** 21:33. ເຮົາມອບອຳນາດແກ່ເຈົ້າເພື່ອເຈົ້າຈະໄດ້ໃຫ້ບັບຕິສະມາ, **3 ນຟ** 11:19–21.

ຖານະປະໂລຫິດແຫ່ງອາໂຣນຖືຂໍກະແຈຂອງການບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, **ຄພ** 13. ພວກເຂົາເປັນຜູ້ໄດ້ຮັບການແຕ່ງຕັ້ງຈາກເຮົາ ເພື່ອໃຫ້ບັບຕິສະມາໃນນາມຂອງເຮົາ, **ຄພ** 18:29.

ໂຢຮັນບັບຕິສະໂຕໄດ້ມອບສິດອຳນາດທີ່ຈະໃຫ້ບັບຕິສະມາແກ່ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ, **ຈສ—ປ** 1:68–69.

*ເງື່ອນໄຂສຳລັບການບັບຕິສະມາ:* ຈົ່ງກັບໃຈ, ແລະ ຮັບບັບຕິສະມາໃນພຣະນາມຂອງບຸດທີ່ຮັກຂອງເຮົາ, **2 ນຟ** 31:11. ພວກທ່ານຕ້ອງກັບໃຈ ແລະ ເກີດໃໝ່, **ແອວ** 7:14. ຈົ່ງເບິ່ງວ່າ ທ່ານຈະບໍ່ຮັບບັບຕິສະມາໂດຍບໍ່ມີຄ່າຄວນ, **ມມ** 9:29. ຈົ່ງສິດສອນຜູ້ເປັນບິດາມານດາວ່າ ພວກເຂົາຕ້ອງກັບໃຈ ແລະ ຮັບບັບຕິສະມາ, ແລະ ຖ່ອມຕົວ, **ມຣນ** 8:10.

ເງື່ອນໄຂສຳລັບຜູ້ທີ່ປາດຖະໜາທີ່ຈະຮັບບັບຕິສະມາໄດ້ຖືກຕັ້ງໄວ້, **ຄພ** 20:37. ເດັກນ້ອຍຈະຮັບບັບຕິສະມາເພື່ອການປົດບາບຂອງພວກເຂົາ ເມື່ອມີອາຍຸໄດ້ແປດປີ, **ຄພ** 68:25, 27.

*ພັນທະ ສັນ ຍາ ທີ່ ໄດ້ ເຮັດ ຜ່ານ ການ ບັບຕິສະມາ:* ພວກທ່ານໄດ້ເຂົ້າເຮັດພັນທະສັນຍາກັບພຣະອົງ, ວ່າພວກທ່ານຈະຮັບໃຊ້ພຣະອົງ ແລະ ຮັກສາພຣະບັນຍັດຂອງພຣະອົງ, **ມຊຢ** 18:8–10, 13.

ຄົນທີ່ກັບໃຈ, ຮັບເອົາພຣະນາມຂອງພຣະຄຣິດ, ແລະ ຕັ້ງໃຈທີ່ຈະຮັບໃຊ້ພຣະອົງ ຈະໄດ້ຮັບໂດຍການຮັບບັບຕິສະມາ, **ຄພ** 20:37.

*ການບັບຕິສະມາແທນຄົນຕາຍ:* ການບັບຕິສະມາແທນຄົນຕາຍນັ້ນ ຈະໝາຍຄວາມວ່າຢ່າງໃດ, **1 ກຣທ** 15:29.

ການບັບຕິສະມາແທນຄົນຕາຍ ໄດ້ຖືກປະຕິບັດເພື່ອການປົດບາບ, **ຄພ** 124:29; 127:5–9; 128:1; 138:33.

*ການບັບຕິສະມາບໍ່ແມ່ນສຳລັບເດັກແດງທາລົກ:* ມັນເປັນການເຍາະເຍີ້ຍພຣະເຈົ້າຢ່າງຮຸນແຮງ ທີ່ພວກທ່ານຈະໃຫ້ບັບຕິສະມາແກ່ເດັກນ້ອຍໆ, **ມຣນ** 8:4–23.

ເດັກນ້ອຍຈະຕ້ອງຮັບບັບຕິສະມາ ເມື່ອມີອາຍຸໄດ້ແປດປີ, **ຄພ** 68:27. ເດັກນ້ອຍທັງປວງຜູ້ໄດ້ຕາຍກ່ອນອາຍຸທີ່ຮູ້ຈັກຮັບຜິດຊອບກໍລອດໃນອານາຈັກສະຫວັນ, **ຄພ** 137:10.

**ບັບຕິສະໂຕ.** *ເບິ່ງ* ໂຢຮັນບັບຕິສະໂຕ

**ບ້ານຂອງພຣະຜູ້ເປັນເຈົ້າ.** *ເບິ່ງ* ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ

**ບ້ານເຮືອນ.** *ເບິ່ງ* ຄອບຄົວ *ນຳອີກ*

ບ້ານເຮືອນຄວນເປັນຈຸດໃຈກາງຂອງພຣະກິດຕິຄຸນ ແລະ ກິດຈະກຳຂອງຄອບຄົວ.

ຜູ້ຊາຍຄວນຢູ່ບ້ານເພື່ອເຮັດໃຫ້ເມຍມີຄວາມສຸກ, **ພບຍ** 24:5.

ພຣະອົງໄດ້ບອກລາວກັບເມືອບ້ານ, **ມຣກ** 8:26. ໃຫ້ລູກຫລານຮຽນຮູ້ປະຕິບັດໜ້າທີ່ແກ່ຄອບຄົວ, **1 ຕມທ** 5:4. ໃຫ້ເປັນຄົນມີສະຕິ, ເປັນຄົນບໍລິສຸດ, ເປັນຄົນເອົາໃຈໃສ່ໃນວຽກບ້ານການເຮືອນ, **ຕຕ** 2:5.

ຈົ່ງກັບໄປບ້ານຂອງເຈົ້າ ແລະ ໄຕ່ຕອງເຖິງເລື່ອງທີ່ເຮົາໄດ້ກ່າວໄປນັ້ນ, **3 ນຟ** 17:2–3. ຂ້າພະເຈົ້າໄດ້ຂໍຮ້ອງພວກເຂົາໃຫ້ຕໍ່ສູ້ເພື່ອເມຍຂອງພວກເຂົາ, ແລະ ເພື່ອລູກຂອງພວກເຂົາ, ແລະ ເພື່ອເຮືອນຂອງພວກເຂົາ, ແລະ ເພື່ອບ້ານຂອງພວກເຂົາ, **ມມ** 2:23.

ຜູ້ເປັນພໍ່ໄດ້ຖືກບັນຊາໃຫ້ພາກພຽນ ແລະ ເປັນຫ່ວງເປັນໃຍກັບບ້ານເຮືອນ, **ຄພ** 93:43–44, 48–50.

**ບາບ.** *ເບິ່ງ* ກະບົດ, ການກະບົດ; ຂຸ່ນເຄືອງໃຈ; ຄົນອະທຳ; ສົກກະປົກ, ຄວາມສົກກະປົກ; ຊົ່ວຮ້າຍ, ຄວາມຊົ່ວຮ້າຍ; ບໍ່ຊອບທຳ, ຄວາມບໍ່ຊອບທຳ; ໜ້າກຽດຊັງ, ຄວາມໜ້າກຽດຊັງ *ນຳອີກ*

ຕັ້ງໃຈບໍ່ເຊື່ອຟັງຕໍ່ພຣະບັນຍັດຂອງພຣະເຈົ້າ.

ຜູ້ທີ່ເຊື່ອງຊ້ອນບາບກຳໄວ້ ຊີວິດຈະບໍ່ຈະເລີນຮຸ່ງເຮືອງ, **ສພສ** 28:13. ເຖິງແມ່ນວ່າບາບຂອງພວກເຈົ້ານັ້ນເປັນສີແດງເຂັ້ມ ແຕ່ເຮົາກໍຈະຊຳລະໃຫ້ຂາວສະອາດດັ່ງຫິມະ, **ອຊຢ** 1:18. ຄົນບາບຈະຕາຍ, ແລະ ຄົນຊອບທຳຈະລອດ, **ອຊກ** 18.

ພຣະເມສານ້ອຍຂອງພຣະເຈົ້າ ຮັບເອົາບາບກຳຂອງມະນຸດສະໂລກໄປເສຍ, **ຢຮ** 1:29. ຈົ່ງຮັບບັບຕິສະມາ, ແລະ ຊຳລະບາບກຳຂອງເຈົ້າ, **ກຈກ** 22:16. ຄ່າຈ້າງຂອງຄວາມຜິດບາບ ກໍຄືຄວາມຕາຍ, **ຣມ** 6:23. ຖ້າຜູ້ໃດຮູ້ວ່າ ອັນໃດເປັນການດີ ແລະ ບໍ່ເຮັດ, ຜູ້ນັ້ນຈຶ່ງມີບາບ, **ຢກບ** 4:17.

ພຣະອົງຈະເຮັດໃຫ້ຕົວຂ້ານ້ອຍສັ່ນຕໍ່ສິ່ງທີ່ຫລຽວເຫັນເປັນບາບບໍ, **2 ນຟ** 4:31. ວິບັດແກ່ຄົນທັງປວງທີ່ຕາຍໃນບາບຂອງຕົນ, **2 ນຟ** 9:38. ເຂົາເຈົ້າຈຶ່ງເບິ່ງບາບບໍ່ໄດ້ ນອກຈາກຈະມີແຕ່ຄວາມກຽດຊັງມັນເທົ່ານັ້ນ, **ແອວ** 13:12. ຢ່າຄິດຂຶ້ນມາເອງ ວ່າລູກຈະຖືກນຳກັບຄືນຈາກບາບໄປຫາຄວາມສຸກ, **ແອວ** 41:9–10. ພຣະຜູ້ເປັນເຈົ້າບໍ່ສາມາດເບິ່ງບາບດ້ວຍລະດັບການຍິນຍອມແມ່ນແຕ່ໜ້ອຍທີ່ສຸດ, **ແອວ** 45:16 (ຄພ 1:31). ເດັກນ້ອຍໆບໍ່ສາມາດເຮັດບາບໄດ້, **ມຣນ** 8:8.

ໃນການກັບໃຈ, ມະນຸດຕ້ອງສາລະພາບ ແລະ ປະຖິ້ມບາບຂອງຕົນເສຍກ່ອນ, **ຄພ**

58:42–43. ບາບ ທີ່ ຮ້າຍ ແຮງ ກວ່າ ຈະ ຄົງ ຢູ່ ກັບ ຄົນ ທີ່ ບໍ່ ໃຫ້ ອະ ໄພ, **ຄພ** 64:9. ຄົນ ໃດ ທີ່ ເຮັດບາບ ຕໍ່ຄວາມສະຫວ່າງຫລາຍ ກໍຈະຖືກ ກ່າວ ໂທດ ຫລາຍ, **ຄພ** 82:3. ຄົນທີ່ເຮັດບາບ ບາບເກົ່າຈະກັບຄືນມາ, **ຄພ** 82:7. ເມື່ອພວກ ເຮົາ ພະ ຍາ ຍາ ມປົກປິດບາບ ຂອງພວກ ເຮົາ, ສະຫວັນຈະຖອນຕົວ, **ຄພ** 121:37.

**ບາບທີ່ອະໄພໃຫ້ບໍ່ໄດ້.** *ເບິ່ງ* ຄາດຕະກຳ, ການຄາດຕະກຳ; ບຸດແຫ່ງຄວາມຈິບຫາຍ; ພຣະວິນຍານບໍລິສຸດ; ໝິ່ນປະໝາດ, ການ ໝິ່ນປະໝາດ *ນຳອີກ*

ບາບຂອງການປະຕິເສດພຣະວິນຍານບໍລິ ສຸດ, ບາບທີ່ບໍ່ສາມາດອະໄພໃຫ້ໄດ້.

ຄຳເວົ້າທີ່ໝິ່ນປະໝາດຕໍ່ສູ້ພຣະວິນຍານບໍລິ ສຸດ ຈະບໍ່ໄດ້ຮັບການໃຫ້ອະໄພ, **ມທ** 12:31–32 (ມຣກ 3:29; ລກ 12:10). ເປັນໄປບໍ່ໄດ້ສຳ ລັບຄົນທີ່ໄດ້ຮັບພຣະວິນຍານບໍລິສຸດແລ້ວ ທີ່ ຈະນຳເຂົາມາສູ່ການກັບໃຈອີກໄດ້, **ຮຣ** 6:4–6. ຖ້າພວກເຮົາໄດ້ຮັບຄວາມຮູ້ເລື່ອງຄວາມ ຈິງແລ້ວ ແຕ່ຍັງເຈດຕະນາເຮັດບາບຢູ່ ເຄື່ອງ ບູຊາລຶບລ້າງບາບ ກໍຈະບໍ່ມີເຫລືອຢູ່ຕໍ່ໄປ, **ຮຣ** 10:26.

ຖ້າລູກປະຕິເສດພຣະວິນຍານບໍລິສຸດ ແລະ ລູກຮູ້ວ່າຕົນປະຕິເສດ, ນີ້ເປັນບາບທີ່ອະໄພ ໃຫ້ບໍ່ໄດ້ເລີຍ, **ແອວ** 39:5–6 (ຢຄ 7:19).

ພວກເຂົາບໍ່ໄດ້ຮັບການ ໃຫ້ອະ ໄພ, ໂດຍ ທີ່ໄດ້ປະຕິເສດພຣະບຸດອົງດຽວທີ່ຖືກຳເນີດ, ໂດຍ ທີ່ ໄດ້ ຄຶງພຣະ ອົງສຳລັບຕົນ ເອງ, **ຄພ** 76:30–35. ການໝິ່ນປະໝາດພຣະວິນຍານ ບໍລິສຸດຈະບໍ່ຖືກອະໄພໃຫ້, ທີ່ເຮັດໃຫ້ຄົນບໍລິ ສຸດຕ້ອງເສຍຊີວິດ ຫລັງຈາກພວກເຈົ້າໄດ້ຮັບ ເອົາພັນທະສັນຍາໃໝ່ ແລະ ເປັນນິດຂອງເຮົາ, **ຄພ** 132:26–27.

**ບາເບນ, ບາບີໂລນ.** *ເບິ່ງ* ເນບູກາດເນັດສາ; ໂລກ *ນຳອີກ*

ເມືອງຫລວງຂອງບາບີໂລນ.

ບາເບນຖືກສ້າງຕັ້ງຂຶ້ນໂດຍນິມໂຣດ ແລະ ເປັນເມືອງເກົ່າແກ່ເມືອງໜຶ່ງໃນແຜ່ນດິນເມໂຊ ໂປຕາເມຍ, ຫລື ຊີນາ (ປຖກ 10:8–10). ພຣະ ຜູ້ເປັນເຈົ້າໄດ້ເຮັດໃຫ້ພາສາສັບສົນຕອນຜູ້ ຄົນພວມສ້າງຫໍບາເບນຂຶ້ນ (ປຖກ 11:1–9; ອທ 1:3–5, 33–35). ຕໍ່ມາບາບີໂລນໄດ້ກາຍ ເປັນເມືອງຫລວງຂອງເນບູກາດເນັດສາ. ເພິ່ນ ໄດ້ສ້າງເມືອງອັນກວ້າງໃຫຍ່ ຊຶ່ງເວລານີ້ຍັງມີ ຊາກເມືອງຮ້າງດັ່ງກ່າວເຫລືອຢູ່. ບາບີໂລນໄດ້ ກາຍເປັນເມືອງທີ່ຊົ່ວຮ້າຍຫລາຍທີ່ສຸດ ແລະ ນັບແຕ່ນັ້ນມາມັນໄດ້ກາຍເປັນສັນຍາລັກຂອງ ຄວາມຊົ່ວຮ້າຍຂອງໂລກ.

ຈົ່ງແລ່ນໜີຈາກບາບີໂລນເສຍ, **ຢມຢ** 51:6.

ບາບີໂລນຈະຖືກສະຖາປະນາຂຶ້ນ ແລະ ຈະ ພັງທະລາຍລົງ, **ພນມ** 17–18.

ບາບີໂລນຈະຖືກທຳລາຍ, **2 ນຟ** 25:15.

ບາບີໂລນຈະພັງທະລາຍ, **ຄພ** 1:16. ເຮົາ ຈະບໍ່ໄວ້ຊີວິດຄົນໃດທີ່ເຫລືອຢູ່ໃນບາບີໂລນ, **ຄພ** 64:24. ຈົ່ງອອກໄປຈາກບາບີໂລນ, **ຄພ** 133:5, 7, 14.

**ບາລາອາມ**

ສາດ ສະ ດາ ຄົນ ໜຶ່ງໃນພຣະຄຳພີເດີມ ຜູ້ ຢາກສາບແຊ່ງຊາວອິດສະຣາເອນເລື່ອງເງິນ. ເພິ່ນໄດ້ຖືກບັນຊາຈາກພຣະຜູ້ເປັນເຈົ້າວ່າບໍ່ ໃຫ້ສາບແຊ່ງຊາວອິດສະຣາເອນ (ຈບຊ 22–24).

ໂຕລໍ ຂອງບາລາອາມບໍ່ຍອມເດີນໄປຂ້າງ ໜ້າ ເພາະທູດສະຫວັນໄດ້ຢືນຂວາງທາງໄວ້, **ຈບຊ** 22:22–35.

**ບາຣະໂທໂລມາຍ.** *ເບິ່ງ* ນະທານາເອັນ *ນຳອີກ*

ໃນ ພຣະ ຄຳ ພີ ໃໝ່, ຜູ້ ໜຶ່ງ ໃນ ກຸ່ມ ອັກຄະ ສາວົກສິບສອງດັ້ງເດີມຂອງພຣະເຢຊູຄຣິດ (ມທ 10:2–4).

**ບາຣະນາບາ**

ຊື່ທີ່ຕັ້ງໃຫ້ແກ່ໂຢເຊັບ, ຊາວເລວີ ຂອງເກາະ ໄຊປຣັດ, ຜູ້ໄດ້ຂາຍນາຂອງຕົນ ແລະ ນຳເອົາ ເງິນມາມອບໃຫ້ແກ່ພວກອັກຄະສາວົກ (ກຈກ 4:36–37). ເຖິງແມ່ນວ່າລາວບໍ່ໄດ້ເປັນຄົນໜຶ່ງ ໃນກຸ່ມອັກຄະສາວົກສິບສອງດັ້ງເດີມ, ແຕ່ລາວ ກໍໄດ້ກາຍເປັນອັກຄະສາວົກ (ກຈກ 14:4, 14)

ແລະ ໄດ້ຮັບໃຊ້ຫລາຍເທື່ອໃນການເດີນທາງຂອງຜູ້ສອນສາດສະໜາ (ກຈກ 11:22–30; 12:25; 13–15; 1 ກຣທ 9:6; ຄລຕ 2:1, 9; ກລຊ 4:10).

**ບາຣາບາ**

ຊື່ຂອງຄົນທີ່ຖືກປ່ອຍໄປ ແທນທີ່ຈະປ່ອຍພຣະເຢຊູ ໃນເວລາທີ່ຖືກຄຶງ. ບາຣາບາເປັນຄົນກະບົດ, ຄາດຕະກອນ, ແລະ ເປັນໂຈນ (ມທ 27:16–26; ມຣກ 15:6–15; ລກ 23:18–25; ຢຮ 18:40).

**ພໍ່ແມ່, ບິດາມານດາ.** *ເບິ່ງ* ພໍ່, ມະຕະ; ມານດາ, ແມ່ *ນຳອີກ*

ພໍ່ ແລະ ແມ່. ສາມີ ແລະ ພັນລະຍາທີ່ມີຄ່າຄວນ ຜູ້ໄດ້ຜະນຶກເຂົ້າກັນຢ່າງຖືກຕ້ອງ ໃນການແຕ່ງງານຢູ່ໃນພຣະວິຫານຂອງພຣະເຈົ້າ ສາມາດບັນລຸບົດບາດຂອງຕົນ ໃນຖານະເປັນບິດາມານດາ ຕະຫລອດຊົ່ວນິລັນດອນ. "ພໍ່ແມ່ມີໜ້າທີ່ຮັບຜິດຊອບທີ່ສັກສິດ ທີ່ຈະລ້ຽງດູລູກເຕົ້າດ້ວຍຄວາມຮັກ ແລະ ຄວາມຊອບທຳ, ທີ່ຈະຈັດຫາສິ່ງຈຳເປັນຕ່າງໆທາງວິນຍານ ແລະ ທາງໂລກໃຫ້ລູກ, ແລະ ສອນເຂົາໃຫ້ຮັກ ແລະ ຮັບໃຊ້ຊຶ່ງກັນແລະກັນ, ຮັກສາພຣະບັນຍັດຂອງພຣະເຈົ້າ, ແລະ ເປັນພົນລະເມືອງທີ່ເຊື່ອຟັງກົດໝາຍບ່ອນທີ່ຕົນອາໄສຢູ່" ("ຄອບຄົວ: ການປະກາດຕໍ່ໂລກ," *Ensign,* Nov. 2010, 129).

ຝ່າຍບຸດທັງຫລາຍ, ຈົ່ງນອບນ້ອມເຊື່ອຟັງບິດາມານດາຂອງຕົນ, **ອຟຊ** 6:1–3 (ກລຊ 3:20).

ອາດາມ ແລະ ເອວາ ເປັນບິດາມານດາຜູ້ທຳອິດຂອງເຮົາ, **1 ນຟ** 5:11. ຄຳສາບແຊ່ງຈະຕົກລົງເທິງຫົວຂອງບິດາມານດາຂອງລູກ, **2 ນຟ** 4:6. ຈົ່ງສອນຜູ້ເປັນບິດາມານດາວ່າ ພວກເຂົາຕ້ອງກັບໃຈ ແລະ ຮັບບັບຕິສະມາ, **ມຣນ** 8:10. ພໍ່ແມ່ໄດ້ຮັບບັນຊາໃຫ້ສອນພຣະກິດຕິຄຸນໃຫ້ແກ່ລູກໆຂອງຕົນ, **ຄພ** 68:25. ເດັກນ້ອຍທຸກຄົນມີສິດທີ່ຈະໄດ້ຮັບການລ້ຽງດູຈາກພໍ່ແມ່ຂອງຕົນ, **ຄພ** 83:4.

ບາບຂອງພໍ່ແມ່ຈະບໍ່ຕົກລົງເທິງຫົວຂອງລູກໆ, **ມຊ** 6:54.

**ບຸກຄົນທີ່ຖືກປ່ຽນສະພາບແລ້ວ**

ບຸກຄົນທີ່ຖືກປ່ຽນແປງ ເພື່ອວ່າເຂົາເຈົ້າຈະບໍ່ປະສົບກັບຄວາມເຈັບປວດ ຫລື ຄວາມຕາຍ ຈົນກວ່າເຂົາເຈົ້າໄດ້ຟື້ນຄືນຊີວິດ ສູ່ຄວາມເປັນອະມະຕະ.

ເອນົກ ໄດ້ຕິດສະໜິດກັບພຣະເຈົ້າ: ແລະ ລາວກໍໄດ້ຫາຍຕົວໄປ; ເພາະພຣະເຈົ້າໄດ້ຮັບເອົາລາວໄປ, **ປຖກ** 5:24 (ຮຣ 11:5; ຄພ 107:48–49). ບໍ່ມີໃຜຮູ້ວ່າອຸບມຸງຂອງໂມເຊຢູ່ໃສ ຈົນເຖິງທຸກວັນນີ້, **ພບຍ** 34:5–6 (ແອວ 45:19). ລົມພະຍຸກໍພັດຫອບເອົາເອລີຢາຂຶ້ນສູ່ສະຫວັນ, **2 ກສ** 2:11.

ຖ້າເຮົາຢາກໃຫ້ລາວມີຊີວິດຢູ່ຈົນເຮົາກັບມາ, ຈະກ່ຽວຂ້ອງອັນໃດກັບເຈົ້າ, **ຢຮ** 21:22–23 (ຄພ 7:1–3).

ເຈົ້າຈະບໍ່ຕ້ອງຊີມລົດຊາດຂອງຄວາມຕາຍເລີຍ, **3 ນຟ** 28:7. ເພື່ອພວກເພິ່ນຈະບໍ່ໄດ້ຊີມລົດຊາດຂອງຄວາມຕາຍ ມັນຈຶ່ງມີການປ່ຽນແປງເກີດຂຶ້ນກັບຮ່າງກາຍຂອງພວກເພິ່ນ, **3 ນຟ** 28:38 (4 ນຟ 1:14; ມມ 8:10–11).

ໂຢຮັນຜູ້ເປັນທີ່ຮັກ ຈະມີຊີວິດຢູ່ຈົນກວ່າພຣະຜູ້ເປັນເຈົ້າສະເດັດມາ, **ຄພ** 7. ເຮົາໄດ້ເອົາເມືອງຊີໂອນຂອງເອນົກເຂົ້າມາໄວ້ໃນຊວງເອິກຂອງເຮົາເອງ, **ຄພ** 38:4 (ມຊ 7:21, 31, 69). ເອນົກ ແລະ ພີ່ນ້ອງຂອງເພິ່ນ ເປັນເມືອງທີ່ຖືກຮັກສາໄວ້ຈົນກວ່າວັນແຫ່ງຄວາມຊອບທຳຈະມາເຖິງ, **ຄພ** 45:11–12. ເອລີຢາໄດ້ຖືກຮັບຂຶ້ນໄປສະຫວັນໂດຍບໍ່ໄດ້ຊີມລົດຊາດຂອງຄວາມຕາຍ, **ຄພ** 110:13.

ພຣະວິນຍານບໍລິສຸດໄດ້ລົງມາເທິງຫລາຍຄົນ, ແລະ ພວກເຂົາໄດ້ຖືກຮັບຂຶ້ນໄປຫາຊີໂອນ, **ມຊ** 7:27.

**ບຸດ ແລະ ທິດາຂອງພຣະເຈົ້າ.** *ເບິ່ງ* ເກີດໃໝ່, ເກີດຈາກພຣະເຈົ້າ; ຊົດໃຊ້, ການຊົດໃຊ້; ທີ່ຖືກຳເນີດ; ມະນຸດ; ລູກໆຂອງພຣະຄຣິດ *ນຳອີກ*

ພຣະຄຳພີໃຊ້ຖ້ອຍຄຳເຫລົ່ານີ້ໃນສອງ

ແບບ. ໃນຄວາມໝາຍໜຶ່ງ, ເຮົາເປັນລູກທາງວິນຍານ ແທ້ໆ ຂອງພຣະບິດາ ເທິງສະຫວັນ. ໃນຄວາມໝາຍໜຶ່ງອີກ, ບຸດ ແລະ ທິດາຂອງພຣະເຈົ້າ ຄືຜູ້ທີ່ໄດ້ເກີດໃໝ່ ຜ່ານການຊົດໃຊ້ຂອງພຣະຄຣິດ.

*ລູກໆ ທາງ ວິນ ຍານ ຂອງ ພຣະ ບິດາ:* ພວກເຈົ້າຄືບັນດາພຣະທັງຫລາຍ, ເປັນພວກລູກຊາຍອົງສູງສຸດທັງໝົດ, **ພສສ** 82:6.
ພວກເຮົາເປັນເຊື້ອສາຍຂອງພຣະເຈົ້າ, **ກຈກ** 17:29. ຄວນຢູ່ໃຕ້ບັງຄັບຂອງພຣະບິດາແຫ່ງບັນດາວິນຍານຈິດ, **ຮຣ** 12:9.
ຂ້າພະເຈົ້າເປັນບຸດຂອງພຣະເຈົ້າ, **ມຊ** 1:13.

*ເດັກ ນ້ອຍ ໄດ້ ເກີດ ໃໝ່ ຜ່ານ ການ ຊົດ ໃຊ້:* ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ພຣະອົງໄດ້ປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ, **ຢຮ** 1:12 (ຣມ 8:14; 3 ນຟ 9:17; ຄພ 11:30). ບັດນີ້ເຮົາເປັນບຸດຂອງພຣະເຈົ້າ, **1 ຢຮ** 3:1–2.
ພວກທ່ານ ຈະ ຖືກ ເອີ້ນ ວ່າ ລູກ ຂອງພຣະຄຣິດ, ບຸດຂອງພຣະອົງ ແລະ ທິດາຂອງພຣະອົງ, **ມຊຢ** 5:7. ທຸກຄົນຕ້ອງເກີດໃໝ່ເສຍກ່ອນ, ກາຍເປັນບຸດ ແລະ ທິດາຂອງພຣະອົງ, **ມຊຢ** 27:25. ພວກເຂົາຈະກາຍເປັນບຸດ ແລະທິດາຂອງເຮົາ, **ອທ** 3:14. ທ່ານຈະເປັນລູກຂອງພຣະຄຣິດຢ່າງແນ່ນອນ, **ມຣນ** 7:19.
ທຸກຄົນທີ່ໄດ້ຮັບພຣະກິດຕິຄຸນຂອງເຮົາເປັນບຸດ ແລະ ທິດາ, **ຄພ** 25:1. ພວກເຂົາເປັນພຣະເຈົ້າ, ແມ່ນແຕ່ເປັນບຸດຂອງພຣະເຈົ້າ, **ຄພ** 76:58.
ດັ່ງນັ້ນ ຄົນ ທັງປວງຈະກາຍເປັນບຸດຂອງເຮົາ, **ມຊ** 6:68. ຫລາຍຄົນໄດ້ເຊື່ອ ແລະ ກາຍເປັນບຸດຂອງພຣະເຈົ້າ, **ມຊ** 7:1.

**ບຸດມະນຸດ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະເຢຊູຄຣິດ *ນຳອີກ*

ຕຳແໜ່ງທີ່ພຣະເຢຊູຄຣິດໄດ້ໃຊ້ ເມື່ອກ່າວເຖິງຕົນເອງ (ລກ 9:22; 21:36). ນັ້ນໝາຍຄວາມວ່າ ພຣະຜູ້ບໍລິສຸດ. ພຣະຜູ້ບໍລິສຸດເປັນພຣະນາມໜຶ່ງຂອງພຣະເຈົ້າອົງເປັນພຣະບິດາ. ເມື່ອພຣະເຢຊູໄດ້ເອີ້ນຕົນເອງວ່າ ບຸດມະນຸດ, ມັນເປັນການປະກາດຢ່າງເປີດເຜີຍເຖິງຄວາມສຳພັນ ແຫ່ງສະຫວັນ ຂອງພຣະອົງນຳພຣະບິດາ. ຕຳແໜ່ງນີ້ໄດ້ຖືກພົບ ເຫັນ ເລື້ອຍໆ ໃນພຣະທຳ. ການເປີດເຜີຍຍຸກສຸດທ້າຍຢືນຢັນຄວາມໝາຍພິເສດ ແລະ ຄວາມສັກສິດຂອງພຣະນາມນີ້ ຂອງພຣະຜູ້ຊ່ວຍໃຫ້ລອດ (ຄພ 45:39; 49:6, 22; 58:65; ມຊ 6:57).

**ບຸດແຫ່ງຄວາມຈິບຫາຍ.** *ເບິ່ງ* ຄວາມຕາຍທາງວິນຍານ; ນະລົກ; ບາບທີ່ອະໄພໃຫ້ບໍ່ໄດ້; ມານ; ອັບປະໂຫຍດ, ຄວາມອັບປະໂຫຍດ *ນຳອີກ*

ບໍລິວານ ຂອງ ຊາຕານ ຜູ້ທີ່ຈະທຸກທໍລະມານ ກັບ ມັນ ໃນ ຊົ່ວນິລັນດອນ. ບຸດແຫ່ງຄວາມຈິບຫາຍ ແມ່ນຮ່ວມດ້ວຍ (1) ບໍລິວານຂອງຊາຕານ ແລະ ໄດ້ຖືກຂັບໄລ່ອອກຈາກສະຫວັນເພາະການກະບົດກ່ອນໂລກມະຕະ, ແລະ (2) ຜູ້ທີ່ໄດ້ຖືກອະນຸຍາດໃຫ້ມາເກີດຢູ່ໃນໂລກ ທີ່ມີຮ່າງກາຍ ແຕ່ໄດ້ຮັບໃຊ້ຊາຕານ ແລະ ຫັນມາຕໍ່ຕ້ານພຣະເຈົ້າ. ຜູ້ຄົນໃນກຸ່ມທີສອງ ຈະຟື້ນຄືນຊີວິດຈາກຄວາມຕາຍ ແຕ່ຈະບໍ່ໄດ້ຖືກໄຖ່ຈາກຄວາມຕາຍ (ທາງວິນຍານ) ຄັ້ງທີສອງ ແລະ ບໍ່ສາມາດອາໄສຢູ່ໃນອານາຈັກຂອງລັດສະໝີພາບ (ຄພ 88:32, 35).

ບໍ່ມີຜູ້ໃດໃນພວກເຂົາໄດ້ເສຍໄປ ເວັ້ນໄວ້ແຕ່ຜູ້ທີ່ຖືກໝາຍໄວ້ສຳລັບຄວາມຈິບຫາຍ, **ຢຮ** 17:12. ກໍເຫລືອວິໄສທີ່ຈະນຳພວກເຂົາມາສູ່ການກັບໃຈອີກໄດ້, **ຮຣ** 6:4–6 (ຮຣ 10:26–29).
ຜູ້ນັ້ນຈະບໍ່ໄດ້ຮັບຄວາມເມດຕາເລີຍ ແລະວາລະສຸດທ້າຍຂອງເຂົາຄື ຄວາມທຸກທໍລະມານທີ່ບໍ່ມີວັນສິ້ນສຸດ, **ມຊຢ** 2:36–39. ເຂົາຈຶ່ງເປັນຄືກັນກັບບໍ່ມີການໄຖ່ເລີຍ, **ມຊຢ** 16:5. ຄົນທີ່ປະຕິເສດສິ່ງມະຫັດສະຈັນຂອງພຣະຄຣິດ ເພື່ອຫາຜົນປະໂຫຍດ ຈະກາຍເປັນບຸດແຫ່ງຄວາມຈິບຫາຍ, **3 ນຟ** 29:7.
ພວກເຂົາຈະບໍ່ໄດ້ຮັບການໃຫ້ອະໄພໃນໂລກນີ້ ຫລື ໃນໂລກທີ່ຈະມາເຖິງ, **ຄພ** 76:30–34 (ຄພ 84:41; 132:27). ພວກເຂົາເທົ່ານັ້ນທີ່ຈະບໍ່ໄດ້ຖືກໄຖ່ຈາກການຕາຍຄັ້ງທີສອງ,

**ຄພ** 76:34–48. ບຸດແຫ່ງຄວາມຈິບຫາຍ ປະຕິເສດພຣະວິນຍານສັກສິດ ຫລັງຈາກໄດ້ຮັບມັນ, **ຄພ** 76:35. ບຸດແຫ່ງຄວາມຈິບຫາຍ ປະຕິເສດພຣະບຸດຫລັງຈາກທີ່ພຣະບິດາໄດ້ເປີດເຜີຍພຣະອົງ, **ຄພ** 76:43.

ກາອິນຈະໄດ້ຖືກເອີ້ນວ່າ ຜູ້ຈິບຫາຍ, **ມຊ** 5:22–26.

**ເບັດທານີ**

ໝູ່ບ້ານທີ່ພຣະເຢຊູຄຣິດໄດ້ພັກເຊົາລະຫວ່າງອາທິດສຸດທ້າຍ ໃນຊີວິດມະຕະຂອງພຣະອົງ (ມທ 21:17; ມຣກ 11:11). ຕັ້ງຢູ່ເທິງພູດອຍທາງຕາເວັນອອກສ່ຽງໃຕ້ຂອງພູໝາກກອກເທດ, ເບັດທານີເປັນບ້ານຂອງລາຊາໂຣ, ມາຣີ, ແລະ ມາທາ (ຢຮ 11:1–46; 12:1).

**ເບັດເລເຮັມ**

ເມືອງນ້ອຍໆທີ່ຕັ້ງຢູ່ປະມານຫ້າໄມ (ແປດກິໂລແມັດ) ທາງພາກໃຕ້ຂອງເຢຣູຊາເລັມ. ໃນພາສາເຮັບເຣີ, ເບັດເລເຮັມ ໝາຍເຖິງ "ບ້ານແຫ່ງອາຫານ"; ມັນຍັງຖືກເອີ້ນອີກວ່າ ເອຟະລາທາ, ໝາຍເຖິງ "ອຸດົມສົມບູນ." ພຣະເຢຊູຄຣິດໄດ້ກຳເນີດໃນເບັດເລເຮັມ (ມີກາ 5:2; ມທ 2:1–8). ມັນເປັນສະຖານທີ່ຝັງສົບຂອງນາງລາເຊັນ (ປຖກ 35:19; 48:7).

ນາງຣຸດ ແລະ ໂບອາດ ໄດ້ອາໃສຢູ່ທີ່ນັ້ນ, **ນຣ** 1:22. ຊາມູເອນໄດ້ເຈີມດາວິດຢູ່ທີ່ນັ້ນ, **1 ຊມອ** 16:1–13; 17:12, 15; 20:6, 28.

ເຮໂຣດໄດ້ສັ່ງຂ້າເດັກນ້ອຍຢູ່ທີ່ນັ້ນ, **ມທ** 2:16.

**ເບັດເອນ**

ໃນພາສາເຮັບເຣີ, ໝາຍເຖິງ "ບ້ານຂອງພຣະເຈົ້າ" ແລະ ເປັນສະຖານທີ່ແຫ່ງໜຶ່ງທີ່ສັກສິດທີ່ສຸດໃນອິດສະຣາເອນ. ມັນຕັ້ງຢູ່ທາງເໜືອຂອງເຢຣູຊາເລັມປະມານສິບໄມ (ສິບຫົກ ກິໂລແມັດ) ທາງເໜືອຂອງເຢຣູຊາເລັມ. ຢູ່ທີ່ນີ້ອັບຣາຮາມໄດ້ສ້າງແທ່ນບູຊາຂຶ້ນເມື່ອເພິ່ນໄປເຖິງການາອານເປັນເທື່ອທຳອິດ (ປຖກ 12:8; 13:3). ຢູ່ທີ່ນີ້ຢາໂຄບໄດ້ເຫັນພາບນິມິດເປັນຂັ້ນໄດຂຶ້ນໄປເຖິງຟ້າສະຫວັນ (ປຖກ 28:10–19). ມັນຍັງເປັນສະຖານທີ່ສັກສິດໃນວັນເວລາຂອງຊາມູເອນນຳອີກ (1 ຊມອ 7:16; 10:3).

**ເບັນຊັດຊາເຣ.** *ເບິ່ງ* ບາເບນ, ບາບີໂລນ *ນຳອີກ*

ໃນພຣະຄຳພີເດີມ, ກະສັດຄົນສຸດທ້າຍແຫ່ງບາບີໂລນ, ປົກຄອງກ່ອນເຈົ້າໄຊຣັດໄດ້ເອົາຊະນະບາບີໂລນ; ບຸດຂອງເນບູກາດເນັດສາ ແລະ ເປັນຜູ້ທີ່ໄດ້ຂຶ້ນປົກຄອງແທນ (ດນອ 5:1–2).

**ເບັນຢາມິນ, ບິດາຂອງໂມໄຊຢາ.** *ເບິ່ງ* ໂມໄຊຢາ, ລູກຊາຍຂອງເບັນຢາມິນ *ນຳອີກ*

ສາດສະດາ ແລະ ກະສັດຄົນໜຶ່ງໃນພຣະຄຳພີມໍມອນ (ມຊຢ 1–6).

ໄດ້ແກ້ບັນຫາທີ່ຮ້າຍແຮງເພື່ອສະຖາປະນາສັນຕິສຸກໃນແຜ່ນດິນ, **ອມນ** 1:23–25 (ຄມ 1:12–18). ໄດ້ສິດສອນລູກຊາຍຂອງເພິ່ນ, **ມຊຢ** 1:1–8. ໄດ້ມອບອານາຈັກໃຫ້ໂມໄຊຢາ ລູກຊາຍຂອງເພິ່ນ, **ມຊຢ** 1:9–18. ຜູ້ຄົນຂອງເພິ່ນໄດ້ມາເຕົ້າໂຮມກັນເພື່ອຟັງຄຳປາໄສເທື່ອສຸດທ້າຍຂອງເພິ່ນ, **ມຊຢ** 2:1–8. ໄດ້ກ່າວຄຳປາໄສຕໍ່ຜູ້ຄົນຂອງເພິ່ນ, **ມຊຢ** 2:9–4:30. ຜູ້ຄົນຂອງເພິ່ນໄດ້ເຮັດພັນທະສັນຍາກັບພຣະຜູ້ເປັນເຈົ້າ, **ມຊຢ** 5–6.

**ເບັນຢາມິນ, ລູກຊາຍຂອງຢາໂຄບ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຄົນທີສອງຂອງຢາໂຄບກັບນາງລາເຊັນ (ປຖກ 35:16–20).

*ເຜົ່າຂອງເບັນຢາມິນ:* ຢາໂຄບ ໄດ້ອວຍພອນເບັນຢາມິນ (ປຖກ 49:27). ລູກຫລານຂອງເບັນຢາມິນເປັນເຊື້ອສາຍນັກຮົບ. ບຸກຄົນສຳຄັນສອງຄົນທີ່ເປັນຊາວເບັນຢາມິນແມ່ນ ໂຊນ, ກະສັດຂອງຊາວອິດສະຣາເອນ ຄົນທຳອິດ (1 ຊມອ 9:1–2), ແລະ ໂປໂລ, ອັກຄະສາວົກໃນພຣະຄຳພີໃໝ່ (ຣມ 11:1).

**ແບບແຜນ**

ແບບຢ່າງທີ່ບຸກຄົນສາມາດເຮັດຕາມ ເພື່ອ

ຈະໄດ້ຮັບຜົນຢ່າງແນ່ນອນ. ໃນພຣະຄຳພີ, ຄຳວ່າ ແບບ ແຜນ ຕາມປົກກະຕິແລ້ວໝາຍເຖິງຕົວຢ່າງຂອງການດຳລົງຊີວິດໃນວິທີໃດວິທີໜຶ່ງ ຫລື ສຳລັບການສ້າງບາງສິ່ງ.

ພຣະ ຜູ້ ເປັນ ເຈົ້າ ໄດ້ ບັນ ຊາ ຊາວ ອິດສະ ຣາເອນ ໃຫ້ສ້າງ ສະຖານທີ່ ນະມັດ ສະການ ຕາມແບບແຜນທີ່ໄດ້ສະແດງຕໍ່ໂມເຊ, **ອພຍ** 25. ດາວິດໄດ້ມອບແບບແຜນການສ້າງພຣະວິຫານໃຫ້ແກ່ໂຊໂລໂມນ, **1 ຂຄ** 28:11–13.

ພຣະເຢຊູຄຣິດຈະໄດ້ສະແດງໃນເຮົາໃຫ້ເຫັນແບບແຜນສຳລັບຄົນທີ່ຈະເຊື່ອໃນພຣະອົງ, **1 ຕມທ** 1:16.

ເຮົາຈະມອບແບບແຜນໃນທຸກສິ່ງໃຫ້ແກ່ພວກເຈົ້າ, ເພື່ອວ່າພວກເຈົ້າຈະບໍ່ຖືກຫລອກລວງ, **ຄພ** 52:14.

**ໂບອາດ.** *ເບິ່ງ* ຣຸດ *ນຳອີກ*

ຜົວຂອງນາງຣຸດ (ນຣ 4:9–10); ພໍ່ຕູ້ທວດຂອງດາວິດ, ກະສັດແຫ່ງອິດສະຣາເອນ (ນຣ 4:13–17); ແລະ ບັນພະບຸລຸດຂອງພຣະຄຣິດ, ຈອມກະສັດ (ລກ 3:32).

**ບໍລິສຸດ, ຜູ້ບໍລິສຸດ, ຄວາມບໍລິສຸດ.** *ເບິ່ງ* ສະອາດ ແລະ ບໍ່ສະອາດ; ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ *ນຳອີກ*

ເປັນອິດສະລະຈາກບາບ ຫລື ຄວາມຜິດ; ບໍ່ມີບ່ອນຕຳນິ. ບຸກຄົນກາຍເປັນຄົນບໍລິສຸດ ເມື່ອຄວາມຄິດ ແລະ ການກະທຳຂອງເຂົາສະອາດໃນທຸກວິທີທາງ. ບຸກຄົນທີ່ເຄີຍເຮັດບາບ ສາມາດກາຍເປັນຄົນບໍລິສຸດໄດ້ ຜ່ານສັດທາໃນພຣະເຢຊູຄຣິດ, ການກັບໃຈ, ແລະ ການຮັບເອົາພິທີການຕ່າງໆຂອງພຣະກິດຕິຄຸນ.

ພວກທີ່ມີສະອາດ ແລະ ໃຈບໍລິສຸດ ພຣະຜູ້ເປັນເຈົ້າຈະອວຍພອນ, **ພສສ** 24:3–5. ຄົນທີ່ຖືພາຊະນະຂອງພຣະຜູ້ເປັນເຈົ້າ ຈົ່ງຮັກສາຕົວໃຫ້ບໍລິສຸດ, **ອຊຢ** 52:11 (ຄພ 133:4–5).

ຜູ້ທີ່ມີໃຈບໍລິສຸດກໍເປັນສຸກ, **ມທ** 5:8 (3 ນຟ 12:8). ສິ່ງໃດທີ່ບໍລິສຸດ ຈົ່ງພິຈາລະນາເຖິງສິ່ງເຫລົ່ານັ້ນ, **ຟລປ** 4:8 (ຫຼຊ 1:13).

ກ່ອນການຕົກ, ອາດາມ ແລະ ເອວາໄດ້ຢູ່ໃນສະພາບຂອງຄວາມໄຮ້ດຽງສາ, **2 ນຟ** 2:23. ທ່ານທັງຫລາຍຜູ້ທີ່ມີໃຈບໍລິສຸດ, ຈົ່ງເງີຍໜ້າຂຶ້ນ ແລະ ຮັບພຣະຄຳອັນໜ້າພໍພຣະໄທຂອງພຣະເຈົ້າ, **ຢຄ** 3:2–3. ພວກທ່ານຈະເງີຍໜ້າເບິ່ງພຣະເຈົ້າໃນມື້ນັ້ນດ້ວຍໃຈອັນບໍລິສຸດ ແລະ ດ້ວຍມືທີ່ສະອາດໄດ້ບໍ, **ແອວ** 5:19. ການເປັນຄົນຂາວສະອາດບໍລິສຸດ ແລະ ປາດສະຈາກມົນທິນຕໍ່ພຣະພັກຂອງພຣະເຈົ້າ, ເຂົາເຈົ້າຈຶ່ງເບິ່ງບາບບໍ່ໄດ້ ນອກຈາກຈະມີແຕ່ຄວາມກຽດຊັງມັນເທົ່ານັ້ນ, **ແອວ** 13:12. ເລືອດຂອງຜູ້ບໍລິສຸດຈະຢືນເປັນພະຍານ, **ແອວ** 14:11. ບໍລິສຸດຄືກັນກັບພຣະຄຣິດທີ່ບໍລິສຸດ, **ມຣນ** 7:48 (ມມ 9:6).

ພຣະຄຣິດຈະເກັບຜູ້ຄົນທີ່ບໍລິສຸດໄວ້ສຳລັບພຣະອົງ, **ຄພ** 43:14. ວິນຍານຂອງມະນຸດແຕ່ລະຄົນບໍລິສຸດໃນຕອນຕົ້ນ, **ຄພ** 93:38. ພຣະຜູ້ເປັນເຈົ້າໄດ້ບັນຊາວ່າ ຕ້ອງສ້າງບ້ານຫລັງໜຶ່ງຂຶ້ນໃນຊີໂອນ ຊຶ່ງໃນນັ້ນຜູ້ທີ່ມີຈິດໃຈບໍລິສຸດຈະໄດ້ເຫັນພຣະເຈົ້າ, **ຄພ** 97:10–17. ນີ້ຄືຊີໂອນ—ຜູ້ທີ່ມີໃຈບໍລິສຸດ, **ຄພ** 97:21. ຄົນບໍລິສຸດຈະບໍ່ຖືກກ່າວໂທດກັບຄົນທີ່ບໍ່ທ່ຽງທຳ, **ຄພ** 104:7. ໂຈເຊັບ ແລະ ໄຮຣຳ ສະມິດ ບໍ່ມີຄວາມຜິດກັບການກ່າວຫາໃດໆ, **ຄພ** 135:6–7.

ເດັກນ້ອຍປາດສະຈາກບາບຈາກການວາງຮາກຖານຂອງໂລກ, **ມຊ** 6:54.

**ບໍ່ສະອາດ.** *ເບິ່ງ* ສະອາດ ແລະ ບໍ່ສະອາດ

**ບໍ່ສັກສິດ.** *ເບິ່ງ* ຄົນອະທຳ

**ບໍ່ຊອບທຳ, ຄວາມບໍ່ຊອບທຳ.** *ເບິ່ງ* ຄົນອະທຳ; ສົກກະປົກ, ຄວາມສົກກະປົກ; ຊົ່ວຮ້າຍ, ຄວາມຊົ່ວຮ້າຍ; ຊອບທຳ, ຄວາມຊອບທຳ; ບາບ *ນຳອີກ*

ຄົນຊົ່ວ, ຄົນບໍ່ທ່ຽງທຳ; ຜູ້ຄົນທີ່ບໍ່ຮັກພຣະເຈົ້າ ຫລື ບໍ່ຮັກສິ່ງທີ່ເປັນຂອງພຣະເຈົ້າ ແລະ ຜູ້ທີ່ບໍ່ສົ່ງເສີມອຸດົມການຂອງພຣະອົງ.

ຄົນຊົ່ວຊ້າອະທຳຈະບໍ່ມີສ່ວນໃນອານາຈັກຂອງພຣະເຈົ້າ, **1 ກຣທ** 6:9–10. ຄົນທີ່ມີແຕ່ຄວາມສຸກຢູ່ກັບຄວາມບໍ່ຊອບທຳຈະອັບປະໂຫຍດ, **2 ທສນ** 2:12. ພຣະເຢຊູຄຣິດສາມາດ

ຊຳລະລ້າງເຮົາຈາກຄວາມບໍ່ຊອບທຳທັງໝົດ, **1 ຢຮ** 1:9.

ກະສັດທີ່ບໍ່ຊອບທຳຈຶ່ງບິດເບືອນທາງແຫ່ງຄວາມຊອບທຳທັງໝົດ, **ມຊຢ** 29:23. ຮາກຖານຂອງຄວາມພິນາດໄດ້ຖືກວາງໄວ້ ໂດຍຄວາມບໍ່ຊອບທຳຂອງພວກທະນາຍຄວາມ ແລະ ຜູ້ຕັດສິນ, **ແອວ** 10:27.

ເຮົາສົ່ງພວກເຈົ້າໄປເພື່ອຕຳນິໂລກ ເຖິງການກະທຳທີ່ບໍ່ຊອບທຳ, **ຄພ** 84:87. ຈິດວິນຍານຈຳເປັນຕ້ອງໄດ້ຮັບການຊຳລະໃຫ້ບໍລິສຸດຈາກຄວາມບໍ່ຊອບທຳທຸກຢ່າງ, **ຄພ** 88:17–18. ທຳມະຊາດຂອງມະນຸດເກືອບທຸກຄົນຄືຈະເລີ່ມໃຊ້ອຳນາດການຄອບຄອງທີ່ບໍ່ຊອບທຳ, **ຄພ** 121:39.

**ບໍ່ເຊື່ອຖື, ຄວາມບໍ່ເຊື່ອຖື.** *ເບິ່ງ* ເຊື່ອ, ຄວາມເຊື່ອ *ນຳອີກ*

ຂາດສັດທາໃນພຣະເຈົ້າ ແລະ ໃນພຣະກິດຕິຄຸນຂອງພຣະອົງ.

ຍ້ອນພວກເຂົາບໍ່ມີຄວາມເຊື່ອ ພຣະອົງຈຶ່ງບໍ່ໄດ້ເຮັດການອັດສະຈັນຫລາຍ, **ມທ** 13:58. ເພາະພວກເຂົາຂາດຄວາມເຊື່ອ ສານຸສິດຂອງພຣະເຢຊູຈຶ່ງຂັບໄລ່ຜີມານຮ້າຍອອກບໍ່ໄດ້, **ມທ** 17:14–21. ໂຜດຊ່ວຍຂ້ານ້ອຍໃຫ້ມີຄວາມເຊື່ອຫລາຍກວ່ານີ້ແດ່ທ້ອນ, **ມຣກ** 9:23–24. ພຣະເຢຊູໄດ້ຕຳນິຕິຕຽນອັກຄະສາວົກຂອງພຣະອົງທີ່ສົງໄສ ແລະ ດື້ດ້ານທັງບໍ່ເຊື່ອຂອງພວກເພິ່ນ, **ມຣກ** 16:14. ຄວາມບໍ່ສັດຊື່ຈະເຮັດໃຫ້ຄວາມສັດຊື່ຂອງພຣະເຈົ້າເສຍປະໂຫຍດບໍ, **ຣມ** 3:3.

ການທີ່ຄົນຜູ້ດຽວຕາຍກໍດີກວ່າປະຊາຊາດຈະເສື່ອມໂຊມ ແລະ ຕາຍຢູ່ໃນຄວາມບໍ່ເຊື່ອຖື, **1 ນຟ** 4:13. ເມື່ອເວລານັ້ນມາເຖິງ ພວກເຂົາຈະເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື, ພຣະອົງຈະເຮັດໃຫ້ພວກເຂົາກະຈັດກະຈາຍໄປ ແລະ ຖືກລົງທັນ, **2 ນຟ** 1:10–11 (ຄພ 3:18). ເປັນຍ້ອນຄວາມບໍ່ເຊື່ອຖືຂອງພວກເຂົາ, ພວກເຂົາຈຶ່ງບໍ່ເຂົ້າໃຈພຣະຄຳຂອງພຣະເຈົ້າ, **ມຊຢ** 26:1–5. ເຮົາຈຶ່ງເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນນີ້ກັບຊາວຢິວບໍ່ໄດ້, ເພາະຄວາມບໍ່ເຊື່ອຖືຂອງພວກເຂົາ, **3 ນຟ** 19:35.

ໃນເວລາທີ່ຜ່ານມາ ຈິດໃຈຂອງພວກເຈົ້າຖືກເຮັດໃຫ້ມືດມົນເພາະຄວາມບໍ່ເຊື່ອຖື, **ຄພ** 84:54–58.

**ບໍ່ມີທີ່ສຸດ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ນຳອີກ*

ພຣະນາມໜຶ່ງອີກຂອງພຣະເຈົ້າ, ບົ່ງບອກເຖິງທຳມະຊາດນິລັນດອນຂອງພຣະອົງ (ຄພ 19:10–12; ມຊ 1:3; 7:35).

**ບໍ່ເອົາໃຈໃສ່.** *ເບິ່ງ* ເວົ້າຈາບໍ່ດີ *ນຳອີກ*

ການເຮັດຫລິ້ນໆ ກັບ ສິ່ງທີ່ສັກສິດ (ຄພ 84:54).

ໄພ່ພົນຍຸກສຸດທ້າຍບໍ່ຄວນນຶກຄິດທີ່ໄຮ້ປະໂຫຍດ, ຫລື ການຫົວເຣຣາ, **ຄພ** 88:69. ຈົ່ງຢຸດຈາກຄວາມທະນົງຕົວຂອງພວກເຈົ້າ ແລະ ຄວາມບໍ່ເອົາໃຈໃສ່, **ຄພ** 88:121.

**ໃບໜ້າ**

ການສະແດງອອກຢູ່ເທິງໃບໜ້າຂອງບຸກຄົນ, ຊຶ່ງສ່ວນຫລາຍສະທ້ອນເຖິງຄຸນສົມບັດທາງວິນຍານ ແລະ ສະພາບຂອງຈິດໃຈ

ຈິດໃຈລຳອຽງຂອງເຂົາຕໍ່ສູ້ເຂົາເອງ, **ອຊຢ** 3:9. ກະສັດຈຶ່ງໜ້າຊີດ ແລະ ຢ້ານຫລາຍ, **ດນອ** 5:6.

ໃບໜ້າຂອງເພິ່ນມີລັກສະນະຄືແສງຟ້າແມບ, **ມທ** 28:3. ໃບໜ້າຂອງພຣະອົງເຫລື້ອມເໝືອນດັ່ງຕາເວັນ, **ພນມ** 1:16.

ພວກທ່ານໄດ້ຮັບເງົາຂອງພຣະອົງໄວ້ໃນໃບໜ້າຂອງພວກທ່ານແລ້ວບໍ, **ແອວ** 5:14, 19. ອຳໂມນໄດ້ເຫັນສີໜ້າຂອງກະສັດປ່ຽນແປງໄປ, **ແອວ** 18:12.

ຈົ່ງຖືສິນອົດເຂົ້າ ແລະ ອະທິຖານດ້ວຍຄວາມຍິນດີໃນໃຈ ແລະ ໃບໜ້າທີ່ຊື່ນບານ, **ຄພ** 59:14–15. ພຣະພັກຂອງພຣະອົງຮຸ່ງເຫລື້ອມແຈ້ງກວ່າຄວາມສະຫວ່າງຂອງດວງຕາເວັນ, **ຄພ** 110:3.

**ປະຈັກພະຍານ.** *ເບິ່ງ* ເປັນພະຍານ; ພະຍານ; ພຣະວິນຍານບໍລິສຸດ *ນຳອີກ*

ຄວາມຮູ້ ແລະ ພະຍານທາງວິນຍານ ໄດ້ຖືກ

ມອບໃຫ້ໂດຍພຣະວິນຍານບໍລິສຸດ. ປະຈັກພະຍານສາມາດເປັນການປະກາດເປັນທາງການ ຫລື ຖືກຕ້ອງຕາມກົດໝາຍ ກ່ຽວກັບສິ່ງທີ່ບຸກຄົນເຫັນວ່າເປັນຄວາມຈິງ (ຄພ 102:26).

ຂ້ອຍຮູ້ຜູ້ໜຶ່ງຢູ່ໃນສະຫວັນສະຖານ, **ໂຢບ** 19:25–26.

ຢ່າລະອາຍທີ່ຈະເປັນພະຍານຝ່າຍພຣະຜູ້ເປັນເຈົ້າຂອງເຮົາ, **2 ຕມທ** 1:8. ເນື້ອຄວາມຂອງການປະກາດພຣະທຳ ກໍເປັນຄຳພະຍານຝ່າຍພຣະເຢຊູ, **ພນມ** 19:10.

ຢືນເປັນພະຍານຂອງພຣະເຈົ້າໃນທຸກເວລາ, **ມຊຢ** 18:9. ໂດຍບໍ່ເຫັນທາງອື່ນແລ້ວທີ່ຈະກູ້ຜູ້ຄົນກັບຄືນ ນອກຈາກຈະພະຍາຍາມຢ່າງເຕັມທີ່ດ້ວຍປະຈັກພະຍານອັນບໍລິສຸດເພື່ອຕຳນິພວກເຂົາ, **ແອວ** 4:19–20. ຂ້າພະເຈົ້າມີທຸກສິ່ງທຸກຢ່າງທີ່ເປັນປະຈັກພະຍານວ່າສິ່ງເຫລົ່ານີ້ເປັນຄວາມຈິງ, **ແອວ** 30:41–44. ທ່ານບໍ່ເຫັນຍ້ອນວ່າທ່ານຈະບໍ່ໄດ້ຮັບພະຍານຈົນກວ່າຫລັງຈາກການທົດລອງສັດທາຂອງທ່ານ, **ອທ** 12:6.

ເຮົາບໍ່ໄດ້ກ່າວໃຫ້ຄວາມສະຫງົບແກ່ຈິດໃຈຂອງເຈົ້າບໍ? ເຈົ້າຈະມີພະຍານໃດທີ່ຍິ່ງໃຫຍ່ໄປກວ່າພະຍານຈາກພຣະເຈົ້າ, **ຄພ** 6:22–23. ແລະ ບັດນີ້, ຫລັງຈາກປະຈັກພະຍານຫລາຍຢ່າງທີ່ໃຫ້ໄວ້ເຖິງພຣະອົງ, ນີ້ຄືປະຈັກພະຍານ ຊຶ່ງພວກເຮົາມອບໃຫ້ເຖິງພຣະອົງ, **ຄພ** 76:22–24. ເຮົາສົ່ງພວກເຈົ້າອອກໄປເປັນພະຍານ ແລະ ເຕືອນຜູ້ຄົນ, **ຄພ** 88:81–82. ຜູ້ເປັນພະຍານໄດ້ສິ້ນຊີວິດໄປແລ້ວ, ແລະ ປະຈັກພະຍານຂອງພວກເພິ່ນຍັງມີພະລັງຢູ່, **ຄພ** 135:4–5.

ເອນົກໄດ້ເຫັນເຫລົ່າທູດສະແດງປະຈັກພະຍານເຖິງພຣະບິດາ ແລະ ພຣະບຸດ, **ມຊ** 7:27. ເຖິງແມ່ນວ່າ ຂ້າພະເຈົ້າຈະຖືກກຽດຊັງ ແລະ ຖືກຂົ່ມເຫັງເພາະການເວົ້າວ່າ ຂ້າພະເຈົ້າໄດ້ເຫັນພາບນັ້ນກໍຕາມ, ແຕ່ມັນເປັນຄວາມຈິງ, **ຈສ—ປ** 1:24–25.

**ປະຕິບັດ.** *ເບິ່ງ* ຖານະປະໂລຫິດ; ຮັບໃຊ້, ການຮັບໃຊ້ *ນຳອີກ*

ທີ່ຈະເຮັດວຽກງານຂອງພຣະຜູ້ເປັນເຈົ້າຢູ່ເທິງແຜ່ນດິນໂລກ. ຜູ້ຮັບໃຊ້ທີ່ຖືກເລືອກຂອງພຣະເຈົ້າ ຈະຕ້ອງຖືກເອີ້ນຈາກພຣະເຈົ້າກ່ອນຈະສາມາດປະຕິບັດວຽກງານຂອງພຣະອົງໄດ້. ເມື່ອຜູ້ປະຕິບັດທີ່ແທ້ຈິງ ເຮັດຕາມພຣະປະສົງຂອງພຣະຜູ້ເປັນເຈົ້າ, ເຂົາເປັນຕົວແທນໃຫ້ແກ່ພຣະຜູ້ເປັນເຈົ້າ ໃນການເຮັດວຽກງານທີ່ເປັນທາງການຂອງຕົນ ແລະ ເປັນຕົວແທນຂອງພຣະອົງ (ຄພ 64:29), ດັ່ງນັ້ນຈຶ່ງເຮັດວຽກງານທີ່ຈຳເປັນສຳລັບຄວາມລອດຂອງມະນຸດຊາດ. ພຣະຜູ້ເປັນເຈົ້າໄດ້ປະທານອັກຄະສາວົກ, ສາດສະດາ, ຜູ້ປະກາດຂ່າວ, ມະຫາປະໂລຫິດ, ສາວົກເຈັດສິບ, ແອວເດີ, ອະທິການ, ປະໂລຫິດ, ຄູສອນ, ມັກຄະນາຍົກ, ຜູ້ຊ່ວຍ, ແລະ ການບໍາຄອງ ເພື່ອເຮັດໃຫ້ໄພ່ພົນຂອງພຣະເຈົ້າດີພ້ອມ, ສຳລັບວຽກງານແຫ່ງການປະຕິບັດສາດສະໜາກິດ (1 ກຣທ 12:12–28; ອຟຊ 4:11–16; ຄພ 20; 107).

ພຣະຜູ້ເປັນເຈົ້າໄດ້ເລືອກເອົາເພິ່ນໃຫ້ປະຕິບັດໃນພຣະນາມຂອງພຣະຜູ້ເປັນເຈົ້າ, **ພບຍ** 18:5. ຜູ້ຄົນຈະເອີ້ນພວກເຈົ້າວ່າເປັນຜູ້ປະຕິບັດຂອງພຣະເຈົ້າຂອງພວກເຮົາ, **ອຊຢ** 61:6.

ບຸດມະນຸດບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້ຕົນ, ແຕ່ມາເພື່ອຮັບໃຊ້, **ມທ** 20:26–28. ເຮົາໄດ້ປະກົດແກ່ເຈົ້າເພື່ອແຕ່ງຕັ້ງເຈົ້າໃຫ້ເປັນຜູ້ຮັບໃຊ້ ແລະ ເປັນພະຍານຂອງເຮົາ, **ກຈກ** 26:16–18. ພຣະເຈົ້າບໍ່ໄດ້ອະຍຸຕິທຳ ຊຶ່ງຈະລືມການງານທີ່ພວກເຈົ້າໄດ້ເຮັດດ້ວຍຄວາມຮັກ ໃນການຮັບໃຊ້ໄພ່ພົນຂອງພຣະອົງ, **ຮຮ** 6:10. ຖ້າຜູ້ໃດບໍລິການຮັບໃຊ້, ກໍໃຫ້ບໍລິການຮັບໃຊ້ເໝືອນຜູ້ຮັບກຳລັງທີ່ພຣະເຈົ້າໂຜດປະທານໃຫ້, **1 ປຕ** 4:10–11.

ພວກເຂົາໄດ້ສິດສອນ, ແລະ ໄດ້ປະຕິບັດສາດສະໜາກິດແກ່ກັນແລະກັນ, **3 ນຟ** 26:19.

ມັນເປັນໜ້າທີ່ຂອງອັກຄະສາວົກສິບສອງທີ່ຈະແຕ່ງຕັ້ງຜູ້ປະກາດຂ່າວປະເສີດ, **ຄພ** 107:39–40. ມະຫາປະໂລຫິດຄົນໜຶ່ງອາດຖືກແຕ່ງຕັ້ງເປັນທາງການສຳລັບການປະຕິບັດເລື່ອງຝ່າຍໂລກ, **ຄພ** 107:71–72. ສາວົກເຈັດສິບເຫລົ່ານີ້ຕ້ອງເປັນຜູ້ປະຕິບັດສາດສະໜາ

ກິດເຄື່ອນທີ່, **ຄພ** 107:93–97. ພວກແອວເດີໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປະຕິບັດສາດສະໜາກິດປະຈຳຢູ່ກັບສາດສະໜາຈັກຂອງເຮົາ, **ຄພ** 124:137.

**ປະຖິ້ມຄວາມເຊື່ອ, ການປະຖິ້ມຄວາມເຊື່ອ.** *ເບິ່ງ* ກະບົດ, ການກະບົດ; ການຟື້ນຟູພຣະກິດຕິຄຸນ *ນຳອີກ*

ບຸກຄົນ, ສາດສະໜາຈັກ, ຫລື ຕະຫລອດທັງປະຊາຊາດທີ່ຫັນໜີຈາກຄວາມຈິງ.

*ການປະຖິ້ມຄວາມເຊື່ອທົ່ວໄປ:* ຊາວອິດສະຣາເອນຕ້ອງປົກປ້ອງໃຈຂອງຕົນ ເພື່ອບໍ່ໃຫ້ຫັນໜີໄປຈາກພຣະຜູ້ເປັນເຈົ້າ, **ພບຍ** 29:18. ຊົນຊາດໃດທີ່ບໍ່ມີພຣະເຈົ້ານຳໜ້າ ກໍເປັນຊົນຊາດທີ່ຂາດວິໄນ, **ສພສ** 29:18. ພວກເຂົາໄດ້ຝ່າຝືນພັນທະສັນຍາອັນເປັນນິດ, **ອຊຢ** 24:5.

ລົມກໍພັດປະທະເຮືອນຢ່າງແຮງ, ແລະເຮືອນນັ້ນກໍໄດ້ເຈື່ອນເພພັງລົງ, **ມທ** 7:27. ເຮົາຮູ້ສຶກປະຫລາດໃຈທີ່ເຈົ້າຕ່າວຄືນຢ່າງຮີບດ່ວນໄປຫາພຣະກິດຕິຄຸນທີ່ແຕກຕ່າງເສຍ, **ຄລຕ** 1:6.

ພວກເຂົາໄດ້ເລີ່ມຕົ້ນໃນທາງດີ ແຕ່ໄດ້ຫລົງທາງໄປໃນໝອກ, **1 ນຟ** 8:23 (1 ນຟ 12:17). ຫລັງຈາກພວກເຂົາຊີມໝາກໄມ້ນັ້ນແລ້ວ ພວກເຂົາກໍຕົກລົງໄປໃນທາງຕ້ອງຫ້າມ, **1 ນຟ** 8:28. ການປະຖິ້ມຄວາມເຊື່ອຂອງຊາວນີໄຟເປັນສິ່ງທີ່ເຮັດໃຫ້ສະດຸດແກ່ຜູ້ທີ່ບໍ່ເຊື່ອ, **ແອວ** 4:6–12. ສະມາຊິກຂອງສາດສະໜາຈັກຫລາຍຄົນໄດ້ກາຍເປັນຄົນອວດດີ ແລະ ໄດ້ຂົ່ມເຫັງສະມາຊິກຄົນອື່ນໆ, **ຮລມ** 3:33–34 (ຮລມ 4:11–13; 5:2–3). ເມື່ອພຣະຜູ້ເປັນເຈົ້າເຮັດໃຫ້ຜູ້ຄົນຂອງພຣະອົງຈະເລີນຮຸ່ງເຮືອງຂຶ້ນ, ບາງເທື່ອພວກເຂົາເຮັດໃຈແຂງກະດ້າງ ແລະ ຫລົງລືມພຣະອົງ, **ຮລມ** 12:2; 13:38. ຊາວນີໄຟໄດ້ເຮັດໃຈແຂງກະດ້າງ ແລະ ໄດ້ຕົກຢູ່ໃຕ້ອຳນາດຂອງຊາຕານ, **3 ນຟ** 2:1–3. ໂມໂຣໄນໄດ້ທຳນາຍກ່ຽວກັບການປະຖິ້ມຄວາມເຊື່ອໃນຍຸກສຸດທ້າຍ, **ມມ** 8:28, 31–41.

ການປະຖິ້ມຄວາມເຊື່ອຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງ, **ຄພ** 1:13–16.

*ການປະຖິ້ມຄວາມເຊື່ອຂອງສາດສະໜາຈັກຄຣິດສະຕຽນລຸ້ນເດີມ:* ຜູ້ຄົນເຫລົ່ານີ້ເຂົ້າໃກ້ເຮົາແຕ່ປາກ, **ອຊຢ** 29:10, 13. ຄວາມມືດຈະປົກຄຸມແຜ່ນດິນໂລກ, **ອຊຢ** 60:2. ພຣະຜູ້ເປັນເຈົ້າຈະເຮັດໃຫ້ຄວາມອຶດຢາກພຣະຄຳຂອງພຣະຜູ້ເປັນເຈົ້າເກີດຂຶ້ນ, **ອມ** 8:11.

ຈະມີພຣະຄຣິດປອມ ແລະ ສາດສະດາປອມປະກົດຂຶ້ນ, **ມທ** 24:24. ຝູງໝາໄນທີ່ຮ້າຍກາດຈະມາໃນທ່າມກາງພວກທ່ານ, **ກຈກ** 20:29. ເຮົາຮູ້ສຶກປະຫລາດໃຈທີ່ເຈົ້າທັງຫລາຍພາກັນປະຖິ້ມພຣະອົງຢ່າງຮີບດ່ວນ, **ຄລຕ** 1:6. ຈະມີການຕົກໄປກ່ອນການສະເດັດມາຄັ້ງທີສອງ, **2 ທສນ** 2:3. ບາງຄົນຫລົງໄປຈາກຄວາມຈິງ, **2 ຕມທ** 2:18. ບາງຄົນເຮັດເໝືອນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງ, ແຕ່ປະຕິເສດອຳນາດໃນນັ້ນ, **2 ຕມທ** 3:2–5. ເວລາຈະມາເຖິງເມື່ອຜູ້ຄົນຈະບໍ່ຍອມຟັງຫລັກຄຳສອນ, **2 ຕມທ** 4:3–4. ຈະມີສາດສະດາ ແລະ ຄູສອນປອມເກີດຂຶ້ນໃນທ່າມກາງຜູ້ຄົນ, **2 ເປໂຕ** 2:1. ບາງຄົນໄດ້ແອບແຝງເຂົ້າມາປະຕິເສດອົງພຣະຜູ້ເປັນເຈົ້າ, **ຢດ** 1:4. ບາງຄົນໄດ້ອວດວ່າເປັນອັກຄະສາວົກ ແຕ່ບໍ່ໄດ້ເປັນ, **ພນມ** 2:2.

ນີໄຟໄດ້ເຫັນຮາກຖານຂອງສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງ, **1 ນຟ** 13:26. ຄົນຕ່າງຊາດໄດ້ເຕະສະດຸດ ແລະ ໄດ້ສ້າງສາດສະໜາຈັກຂຶ້ນຢ່າງຫລວງຫລາຍ, **2 ນຟ** 26:20.

ເຂົາໄດ້ໜີໄປຈາກພິທີການຂອງເຮົາ ແລະໄດ້ຝ່າຝືນພັນທະສັນຍາອັນເປັນນິດຂອງເຮົາ, **ຄພ** 1:15. ຄວາມມືດປົກຄຸມແຜ່ນດິນໂລກ ແລະ ຄວາມມືດອັນຮ້າຍແຮງປົກຄຸມຈິດໃຈຜູ້ຄົນ, **ຄພ** 112:23.

ໂຈເຊັບໄດ້ຖືກບອກວ່າ ສາດສະໜາຈັກທັງໝົດນັ້ນບໍ່ຖືກຕ້ອງ; ຈິດໃຈຂອງພວກເຂົາຫ່າງໄກຈາກພຣະເຈົ້າ, **ຈສ—ປ** 1:19.

**ປະຖົມມະການ.** *ເບິ່ງ* ເພັນຕາຕຸກ *ນຳອີກ*

ພຣະທຳປະຖົມມະການເປັນໜັງສືເຫລັ້ມທຳອິດຢູ່ໃນພຣະຄຳພີເດີມ ແລະ ສາດສະດາໂມເຊເປັນຄົນຂຽນ. ມັນໃຫ້ເລື່ອງລາວກ່ຽວກັບການເລີ່ມຕົ້ນ, ດັ່ງເຊັ່ນການສ້າງແຜ່ນດິນໂລກ,

ການເນລະມິດສ້າງສັດສາວາສິ່ງ ແລະ ມະນຸດໄວ້ເທິງແຜ່ນດິນໂລກ, ການຕົກຂອງອາດາມ ແລະ ເອວາ, ການເປີດເຜີຍເລື່ອງພຣະກິດຕິຄຸນຕໍ່ອາດາມ, ການເລີ່ມຕົ້ນຂອງເຜົ່າ ແລະ ເຊື້ອສາຍ, ການເລີ່ມຕົ້ນຂອງພາສາຕ່າງໆທີ່ບາເບນ, ແລະ ການເລີ່ມຕົ້ນຂອງຄອບຄົວອັບຣາຮາມທີ່ພາໄປສູ່ການສ້າງຕັ້ງເຊື້ອສາຍອິດສະຣາເອນ. ບົດບາດຂອງໂຢເຊັບໃນຖານະທີ່ເປັນຜູ້ຊ່ວຍກູ້ຊາວອິດສະຣາເອນກໍໄດ້ຖືກເນັ້ນໜັກຢູ່ໃນໜັງສືປະຖົມມະການນີ້ຄືກັນ.

ການເປີດເຜີຍຍຸກສຸດທ້າຍຢືນຢັນ ແລະ ໃຫ້ຄວາມແຈ່ມແຈ້ງກ່ຽວກັບໜັງສືປະຖົມມະການ (1 ນຟ 5; ອທ 1; ມຊ 1–8; ອຣຣ 1–5).

ໃນພຣະທຳປະຖົມມະການ, ບົດທີ 1–4 ກ່ຽວຂ້ອງກັບການສ້າງໂລກ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງຄອບຄົວຂອງອາດາມ. ບົດທີ 5–10 ບັນທຶກປະຫວັດຂອງໂນອາ. ບົດທີ 11–20 ບອກເຖິງອັບຣາຮາມ ແລະ ຄອບຄົວຂອງເພິ່ນ ຈົນເຖິງສະໄໝຂອງອີຊາກ. ບົດທີ 21–35 ຕິດຕາມຄອບຄົວຂອງອີຊາກ. ບົດທີ 36 ບອກເຖິງເອຊາວ ແລະ ຄອບຄົວຂອງລາວ. ບົດທີ 37–50 ບອກເຖິງຄອບຄົວຂອງຢາໂຄບ ແລະ ໃຫ້ເລື່ອງລາວກ່ຽວກັບໂຢເຊັບຖືກຂາຍໄປປະເທດເອຢິບ ແລະ ບົດບາດຂອງລາວໃນການຊ່ວຍກູ້ເຊື້ອສາຍອິດສະຣາເອນ.

**ປະທັບຢູ່ໃນທຸກບ່ອນ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ນຳອີກ*

ຄວາມສາມາດຂອງພຣະເຈົ້າທີ່ສາມາດປະທັບຢູ່ໃນທຸກບ່ອນຜ່ານພຣະວິນຍານຂອງພຣະອົງ (ພສສ 139:7–12; ຄພ 88:7–13, 41).

**ປະທານ.** *ເບິ່ງ* ສາດສະດາ; ຝ່າຍປະທານສູງສຸດ *ນຳອີກ*

ຕຳແໜ່ງສຳລັບເຈົ້າໜ້າທີ່ຄວບຄຸມຂອງອົງການ. ປະທານຂອງສາດສະໜາຈັກເປັນສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍ (ຄພ 21:1; 107:91–92), ແລະ ສະມາຊິກຂອງສາດສະໜາຈັກ ຕ້ອງເອີ້ນສາດສະດາຂອງສາດສະໜາຈັກຕາມຕຳແໜ່ງທີ່ວ່າ "ປະທານ" (ຄພ 107:65). ເພິ່ນເປັນຜູ້ດຽວເທົ່ານັ້ນຢູ່ເທິງແຜ່ນດິນໂລກ ທີ່ມີສິດອຳນາດເພື່ອໃຊ້ຂໍກະແຈທັງໝົດຂອງຖານະປະໂລຫິດ.

ຫົວໜ້າກຸ່ມຖານະປະໂລຫິດ ແລະ ອົງການອື່ນໆຂອງສາດສະໜາຈັກ ກໍມີຕຳແໜ່ງຂອງປະທານ ຄືກັນ.

ພຣະຜູ້ເປັນເຈົ້າໄດ້ປະທານຂໍກະແຈຂອງອານາຈັກໃຫ້ໂຈເຊັບ ສະມິດ, **ຄພ** 81:1–2. ປະທານສາມຄົນ ປະກອບເປັນກຸ່ມຂອງຝ່າຍປະທານຂອງສາດສະໜາຈັກ, **ຄພ** 107:21–24. ປະທານຖືກແຕ່ງຕັ້ງຕາມລະບຽບຂອງເມນຄີເສເດັກ, **ຄພ** 107:29. ໜ້າທີ່ຂອງປະທານປົກຄອງມັກຄະນາຍົກ, ຄູສອນ, ປະໂລຫິດ, ແລະ ແອວເດີ ໄດ້ຖືກອະທິບາຍໄວ້, **ຄພ** 107:85–89 (ຄພ 124:136–138, 142). ມີປະທານເຈັດຄົນທີ່ປົກຄອງສາວົກເຈັດສິບ, **ຄພ** 107:93–95. ປະທານສະເຕກໄດ້ຖືກແຕ່ງຕັ້ງໄວ້, **ຄພ** 124:133–135.

**ປະເພນີ**

ຄວາມເຊື່ອ ແລະ ການປະຕິບັດ ທີ່ສົ່ງຕໍ່ກັນມາ ຈາກລຸ້ນສູ່ລຸ້ນ (2 ທສນ 2:15). ໃນພຣະຄຳພີ, ພຣະຜູ້ເປັນເຈົ້າໄດ້ເຕືອນຄົນຊອບທຳເປັນປະຈຳວ່າ ຄວນຫລີກເວັ້ນຈາກຮີດຄອງປະເພນີທີ່ຊົ່ວຮ້າຍຂອງມະນຸດ (ລລວ 18:30; ມຣກ 7:6–8; ມຊຍ 1:5; ຄພ 93:39–40).

**ປະໂລຫິດ, ຖານະປະໂລຫິດແຫ່ງອາໂຣນ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ; ມະຫາປະໂລຫິດ; ອາໂຣນ, ອ້າຍຂອງໂມເຊ *ນຳອີກ*

ຕຳແໜ່ງຂອງຖານະປະໂລຫິດແຫ່ງອາໂຣນ. ໃນສະໄໝບູຮານ, ໜ້າທີ່ສູງສຸດໃນຖານະປະໂລຫິດຂອງຊາວເລວີ ແມ່ນຖືກປະຕິບັດໂດຍອາໂຣນ ແລະ ຕະກຸນຂອງເພິ່ນເທົ່ານັ້ນ. ເມື່ອພຣະຄຣິດໄດ້ບັນລຸກົດຂອງໂມເຊແລ້ວ, ກົດລະບຽບນີ້ກໍໄດ້ຖືກຍົກເລີກ.

ໜ້າທີ່ຂອງປະໂລຫິດໃນສາດສະໜາຈັກທີ່ຖືກຟື້ນຟູຄືນມາໃໝ່ ໄດ້ຖືກບັນຍາຍໄວ້, **ຄພ** 20:46–52.

**ປະໂລຫິດ, ຖານະປະໂລຫິດແຫ່ງເມນຄີເສເດັກ.** *ເບິ່ງ* ຖານະປະໂລຫິດແຫ່ງເມນຄີເສເດັກ; ມະຫາປະໂລຫິດ *ນຳອີກ*

ບຸກຄົນທີ່ປະຕິບັດຕາມພິທີການຕ່າງໆທາງສາດສະໜາສຳລັບຄົນອື່ນ ແລະ ເຈາະຈົງໃສ່ພຣະເຈົ້າ. ສ່ວນຫລາຍໃນ ພຣະຄຳພີ, ຕາມປົກກະຕິ ປະໂລຫິດເປັນມະຫາປະໂລຫິດຕາມລະບຽບຂອງເມນຄີເສເດັກ (ແຮວ 13:2). ບຸກຄົນທີ່ໄດ້ຮັບຄວາມສົມບູນແຫ່ງລັດສະໝີພາບຂອງພຣະເຈົ້າ ຫລັງຈາກການຟື້ນຄືນຊີວິດ ຈະກາຍເປັນປະໂລຫິດ ແລະ ກະສັດໃນໂລກຊັ້ນສູງ.

ເມນຄີເສເດັກເປັນປະໂລຫິດຂອງພຣະເຈົ້າອົງສູງສຸດ, **ປຖກ** 14:18. ເຈົ້າຈະໄດ້ເປັນປະໂລຫິດຕະຫລອດການຕາມລະບຽບຂອງເມນຄີເສເດັກ, **ພສສ** 110:4 (ຮຣ 5:6; 7:17, 21).

ພຣະຄຣິດໄດ້ຕັ້ງເຮົາທັງຫລາຍໄວ້ໃຫ້ເປັນປະໂລຫິດຂອງພຣະເຈົ້າ ແລະ ພຣະບິດາຂອງພຣະອົງ, **ພນມ** 1:6 (ພນມ 5:10; 20:6).

ໃຫ້ຈື່ຈຳໄວ້ວ່າ ອົງພຣະຜູ້ເປັນເຈົ້າ ໄດ້ແຕ່ງຕັ້ງປະໂລຫິດຕາມຖານະອັນສັກສິດຂອງພຣະອົງ, **ແອວ** 13:1–20.

ຄົນທີ່ຈະອອກມາໃນການຟື້ນຄືນຊີວິດຂອງຄົນທ່ຽງທຳ ແມ່ນບັນດາປະໂລຫິດ ແລະ ເຫລົ່າກະສັດ, **ຄພ** 76:50, 55–60.

**ປະຫວັດຄອບຄົວ.** *ເບິ່ງ* ຄວາມລອດສຳລັບຄົນຕາຍ; ລຳດັບການສືບເຊື້ອສາຍ

**ປັດສະຄາ.** *ເບິ່ງ* ເຂົ້າແລງຄາບສຸດທ້າຍ; ພຣະເມສານ້ອຍຂອງພຣະເຈົ້າ *ນຳອີກ*

ງານລ້ຽງປັດສະຄາຖືກຕັ້ງໄວ້ເພື່ອຊ່ວຍເຫລືອລູກຫລານຂອງອິດສະຣາເອນ ຈື່ຈຳຕອນທີ່ທູດຜູ້ທຳລາຍໄດ້ຜ່ານກາຍເຮືອນຂອງພວກເຂົາໄປ ແລະ ໄດ້ປົດປ່ອຍພວກເຂົາຈາກຊາວເອຢິບ (ອພຍ 12:21–28; 13:14–15). ເລືອດຂອງລູກແກະທີ່ບໍ່ມີບ່ອນຕຳໜິ ຊຶ່ງຖືກໃຊ້ເປັນເຄື່ອງໝາຍ ເພື່ອຊ່ວຍຊີວິດຊາວອິດສະຣາເອນໃນສະໄໝບູຮານ, ກໍເປັນເຄື່ອງໝາຍເຖິງພຣະເຢຊູຄຣິດ, ພຣະເມສານ້ອຍຂອງພຣະເຈົ້າ, ຊຶ່ງການເສຍສະລະຂອງພຣະອົງໄດ້ໄຖ່ມະນຸດຊາດ.

ນີ້ແມ່ນພິທີການຂອງງານປັດສະຄາ, **ອພຍ** 12:43.

ພຣະເຢຊູ ແລະ ອັກຄະສາວົກຂອງພຣະອົງໄດ້ສະຫລອງງານປັດສະຄາໃນການກິນເຂົ້າແລງຄາບສຸດທ້າຍ, **ມທ** 26:17–29 (ມຣກ 14:12–25). ເບິ່ງແມ ພຣະເມສານ້ອຍຂອງພຣະເຈົ້າ, ຜູ້ຊຶ່ງຮັບເອົາບາບກຳຂອງໂລກ, **ຢຮ** 1:29, 36. ພຣະຄຣິດຜູ້ເປັນປັດສະຄາຂອງເຮົາໄດ້ຖືກຂ້າບູຊາແທນເຮົາ, **1 ກຣທ** 5:7. ເຮົາໄດ້ຖືກໄຖ່ໂດຍໂລຫິດຂອງພຣະຄຣິດ, ຄືກັນກັບລູກແກະທີ່ປາດສະຈາກບ່ອນຕຳນິ, **1 ປຕ** 1:18–19.

ມີສັດທາໃນພຣະເມສານ້ອຍຂອງພຣະເຈົ້າຜູ້ເອົາບາບຂອງໂລກໄປ, **ແອວ** 7:14.

ໄພ່ພົນຂອງພຣະເຈົ້າຜູ້ຮັກສາພຣະວາຈາແຫ່ງປັນຍາ ຈະຖືກຮັກສາໄວ້ເໝືອນດັ່ງລູກຫລານຂອງອິດສະຣາເອນ, **ຄພ** 89:21.

ພຣະເມສານ້ອຍໄດ້ຖືກປະຫານນັບຕັ້ງແຕ່ການວາງຮາກຖານຂອງໂລກ, **ມຊ** 7:47.

**ປັນຍາຈານ**

ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມຊຶ່ງບັນຈຸພາບສະທ້ອນເຖິງບັນຫາອັນໜັກໜ່ວງທີ່ສຸດຂອງຊີວິດ.

ຜູ້ຂຽນປຶ້ມ, ຜູ້ສັ່ງສອນ, ກໍຂຽນຢ່າງມາກມາຍຈາກຄວາມຄິດຄວາມເຫັນຂອງຜູ້ທີ່ປາດສະຈາກຄວາມເຂົ້າໃຈເລື່ອງພຣະກິດຕິຄຸນ. ເພິ່ນຂຽນຕາມຄວາມຮູ້ສຶກຂອງຊາວໂລກ—ນັ້ນຄື, ຄົນທີ່ "ຢູ່ໃຕ້ຟ້າສະຫວັນ" (ປຍຈ 1:9). ເນື້ອໃນສ່ວນຫລາຍຢູ່ໃນປຶ້ມເບິ່ງເປັນເລື່ອງຮ້າຍ ແລະ ສິ້ນຫວັງ (ປຍຈ 9:5, 10). ນີ້ບໍ່ແມ່ນວິທີທີ່ພຣະຜູ້ເປັນເຈົ້າປະສົງໃຫ້ເຮົາຄິດເຫັນຊີວິດ ແຕ່ເປັນສິ່ງທີ່ຜູ້ສັ່ງສອນໄດ້ສັງເກດເຫັນສິ່ງທີ່ປະກົດຕໍ່ຜູ້ຄົນຢູ່ໃນໂລກທີ່ບໍ່ໄດ້ຮຽນຮູ້. ສ່ວນທີ່ເປັນທາງວິນຍານສ່ວນຫລາຍຂອງປຶ້ມແມ່ນ ບົດທີ 11 ແລະ 12, ບ່ອນທີ່ຜູ້ຂຽນໄດ້ສະຫລຸບວ່າ ສິ່ງດຽວເທົ່ານັ້ນທີ່ມີຄ່າອັນເປັນນິດ ແມ່ນການເຊື່ອຟັງຕໍ່ພຣະບັນຍັດຂອງພຣະເຈົ້າ.

**ປ່າສັກສິດ.** *ເບິ່ງ* ພາບທີ່ມາໃຫ້ເຫັນຄັ້ງທຳອິດ

**ປ້າຍສັນຍານ**

ໃນພຣະຄຳພີ, ທຸງ ຫລື ສັນຍາລັກທີ່ຢູ່ອ້ອມຮອບ ໃນບ່ອນທີ່ຜູ້ຄົນເຕົ້າໂຮມກັນໃນຄວາມເປັນໜຶ່ງໃນຈຸດປະສົງ ຫລື ເອກະລັກ. ໃນສະໄໝບູຮານ ປ້າຍສັນຍານເປັນສິ່ງທີ່ໃຊ້ລວມກຳລັງທະຫານຢູ່ໃນສະໜາມຮົບ. ພຣະຄຳພີມໍມອນ ແລະ ສາດສະໜາຈັກຂອງພຣະເຢຊູຄຣິດເປັນສັນຍາລັກຂອງປ້າຍສັນຍານຕໍ່ປະຊາຊາດທັງປວງຂອງແຜ່ນດິນໂລກ.

ພຣະອົງຈະເຮັດສັນຍານເອີ້ນເອົາຊາດໜຶ່ງທີ່ຢູ່ຫ່າງໄກ, **ອຊຢ** 5:26 (2 ນຟ 15:26). ລາຊາວົງຂອງດາວິດຈະເປັນສັນຍາລັກ, **ອຊຢ** 11:10 (2 ນຟ 21:10; ຄພ 113:6).

ຈົ່ງຍົກປ້າຍສັນຍານແຫ່ງສັນຕິພາບຂຶ້ນ, **ຄພ** 105:39.

**ປ້າຍແຫ່ງເສລີພາບ.** *ເບິ່ງ* ໂມໂຣໄນ, ນາຍທັບ *ບຳອິກ*

ປ້າຍທີ່ໂມໂຣໄນໄດ້ຍົກຂຶ້ນ, ຜູ້ຊຶ່ງເປັນຫົວໜ້າຜູ້ບັງຄັບບັນຊາກອງທັບຂອງຊາວນີໄຟໃນພຣະຄຳພີມໍມອນ. ໂມໂຣໄນ ໄດ້ເຮັດປ້າຍຂຶ້ນ ເພື່ອດົນໃຈຊາວນີໄຟ ໃຫ້ປົກປ້ອງສາດສະໜາ, ອິດສະລະພາບ, ສັນຕິສຸກ, ແລະ ຄອບຄົວຂອງເຂົາເຈົ້າ.

ໂມໂຣໄນໄດ້ເຮັດປ້າຍແຫ່ງເສລີພາບຈາກເສື້ອຄຸມຂອງເພິ່ນ, **ແອວ** 46:12–13. ຄົນທີ່ຮັກປ້າຍນີ້ ໄດ້ເຂົ້າເຮັດພັນທະສັນຍາ, **ແອວ** 46:20–22. ໂມໂຣໄນໄດ້ສັ່ງໃຫ້ເອົາປ້າຍປັກໄວ້ຢູ່ເທິງທຳສູງທຸກບ່ອນ, **ແອວ** 46:36 (ແອວ 51:20).

**ປິຕຸ, ແຫ່ງປິຕຸ.** *ເບິ່ງ* ຖານະປະໂລຫິດແຫ່ງເມນຄີເສເດັກ; ປິຕຸພອນ; ຜູ້ປະກາດຂ່າວ; ພໍ່, ມະຕະ *ບຳອິກ*

ພຣະຄຳພີກ່າວເຖິງປິຕຸສອງຊະນິດ: (1) ຕຳແໜ່ງໃນຖານະປະໂລຫິດແຫ່ງເມນຄີເສເດັກ, ບາງເທື່ອຖືກເອີ້ນວ່າ ຜູ້ປະກາດຂ່າວ; (2) ພໍ່ຂອງຄອບຄົວ. ປິຕຸທີ່ໄດ້ຮັບການແຕ່ງຕັ້ງ ຈະມອບພອນພິເສດໃຫ້ແກ່ສະມາຊິກຂອງສາດສະໜາຈັກທີ່ມີຄ່າຄວນ.

*ປິຕຸທີ່ໄດ້ຮັບການແຕ່ງຕັ້ງ:* ໃຫ້ບາງຄົນເປັນຜູ້ປະກາດພຣະທຳ ແລະ ບາງຄົນເປັນຜູ້ປະກາດຂ່າວປະເສີດ, **ອຟຊ** 4:11 (ຫຼຊ 1:6).

ມັນເປັນໜ້າທີ່ຂອງອັກຄະສາວົກສິບສອງທີ່ຈະແຕ່ງຕັ້ງເປັນຜູ້ປະກາດຂ່າວປະເສີດ, **ຄພ** 107:39. ໄຮຣຳຈະໄດ້ຮັບຕຳແໜ່ງຖານະປະໂລຫິດ ແລະ ປິຕຸ, **ຄພ** 124:91–92, 124; 135:1.

*ພໍ່:* ຢາໂຄບໄດ້ໃຫ້ພອນແກ່ພວກລູກຊາຍຂອງເພິ່ນ ແລະ ລູກຫລານຂອງພວກເຂົາ, **ປຖກ** 49:1–28.

ຂ້າພະເຈົ້າມີສິດທີ່ຈະກ່າວຢ່າງເຊື່ອໝັ້ນຕໍ່ພວກທ່ານ ເຖິງກະສັດດາວິດ, **ກຈກ** 2:29.

ລີໄຮໄດ້ແນະນຳ ແລະ ໃຫ້ພອນແກ່ຜູ້ຄົນຂອງເພິ່ນ, **2 ນຟ** 4:3–11.

ຂ້າພະເຈົ້າໄດ້ກາຍເປັນຜູ້ຮັບມູນມໍລະດົກທີ່ຖືກຕ້ອງ, ໂດຍຖືສິດຊຶ່ງເປັນຂອງບັນພະບຸລຸດ, **ອຣຮ** 1:2–4.

**ປິຕຸພອນ.** *ເບິ່ງ* ປິຕຸ, ແຫ່ງປິຕຸ; ຜູ້ປະກາດຂ່າວ; ພໍ່, ມະຕະ *ບຳອິກ*

ພອນທີ່ມອບໃຫ້ແກ່ສະມາຊິກຂອງສາດສະໜາຈັກທີ່ມີຄ່າຄວນ ໂດຍປິຕຸທີ່ໄດ້ຮັບການແຕ່ງຕັ້ງ. ປິຕຸພອນບັນຈຸຄຳແນະນຳຂອງພຣະຜູ້ເປັນເຈົ້າສຳລັບບຸກຄົນທີ່ຮັບເອົາພອນ ແລະ ປະກາດວ່າ ເຂົາເປັນທາຍາດຂອງໃຜ ໃນເຊື້ອສາຍອິດສະຣາເອນ. ພໍ່ສາມາດມອບພອນພິເສດໃນຖານະປິຕຸຂອງຄອບຄົວຂອງຕົນ, ແຕ່ພອນເຊັ່ນນັ້ນ ບໍ່ໄດ້ຖືກບັນທຶກ ຫລື ເກັບກຳໄວ້ໂດຍສາດສະໜາຈັກ.

ອິດສະຣາເອນໄດ້ເອົາມືຂວາວາງເທິງຫົວຂອງເອຟະຣາອິມ, **ປຖກ** 48:14. ຢາໂຄບໄດ້ໃຫ້ພອນແກ່ພວກລູກຊາຍຂອງເພິ່ນ ແລະ ລູກຫລານຂອງພວກເຂົາ, **ປຖກ** 49.

ລີໄຮໄດ້ໃຫ້ພອນແກ່ຜູ້ຄົນຂອງເພິ່ນ, **2 ນຟ** 4:3–11.

**ປິ່ນປົວ, ການປິ່ນປົວ.** *ເບິ່ງ* ການປະຕິບັດຕໍ່ຄົນເຈັບປ່ວຍ; ເຈີມ, ການເຈີມ *ບຳອິກ*

ທີ່ຈະເຮັດໃຫ້ຫາຍດີ ຫລື ມີສຸຂະພາບດີຄືນ

ອີກ, ທັງຮ່າງກາຍ ແລະ ວິນຍານ. ພຣະຄຳພີບັນຈຸຫລາຍຕົວຢ່າງກ່ຽວກັບການປິ່ນປົວທີ່ມະຫັດສະຈັນໂດຍພຣະຜູ້ເປັນເຈົ້າ ແລະ ຜູ້ຮັບໃຊ້ຂອງພຣະອົງ.

ເຮົາຄືພຣະຜູ້ເປັນເຈົ້າຜູ້ທີ່ປິ່ນປົວຮັກສາເຈົ້າໃຫ້ດີ, **ອພຍ** 15:26. ນາອາມານໄດ້ຈຸ່ມຕົນເອງລົງໄປໃນແມ່ນ້ຳຈໍແດນເຈັດເທື່ອ ແລ້ວກໍຫາຍດີພະຍາດ, **2 ກສ** 5:1–14. ພວກເຮົາຖືກປິ່ນປົວໃຫ້ດີຍ້ອນໂທດກຳທີ່ທ່ານຮັບ, **ອຊຢ** 53:5 (ມຊຢ 14:5). ດວງຕາເວັນຂຶ້ນ ແລະ ຈະນຳເອົາການປິ່ນປົວມາສູ່ເຂົາດັ່ງແສງດວງອາທິດ, **ມລກ** 4:2.

ພຣະເຢຊູໂຜດຮັກສາຄົນໃຫ້ຫາຍດີຈາກພະຍາດໂລຄາທຸກຊະນິດ, **ມທ** 4:23 (ມທ 9:35). ພຣະອົງໃຫ້ສິດອຳນາດແກ່ເພິ່ນເພື່ອໃຫ້ພະຍາດໂລຄາທັງການເຈັບໄຂ້ໄດ້ປ່ວຍທຸກຢ່າງດີໄດ້, **ມທ** 10:1. ພຣະອົງໄດ້ໃຊ້ຂ້ານ້ອຍມາປິ່ນປົວໃນທີ່ຊອກຊ້ຳ, **ລກ** 4:18.

ຄົນເຫລົ່ານັ້ນໄດ້ຮັບການປິ່ນປົວໂດຍອຳນາດຂອງພຣະເມສານ້ອຍຂອງພຣະເຈົ້າ, **1 ນຟ** 11:31. ຖ້າຫາກເຈົ້າເຊື່ອໃນການໄຖ່ຂອງພຣະຄຣິດ ເຈົ້າກໍຈະຫາຍດີໄດ້, **ແອວ** 15:8. ພຣະອົງໄດ້ປິ່ນປົວພວກເຂົາທຸກຄົນ, **3 ນຟ** 17:9.

ຄົນທີ່ມີສັດທາໃນເຮົາທີ່ຈະຮັບການປິ່ນປົວໃຫ້ຫາຍດີຈະຫາຍດີ, **ຄພ** 42:48. ໃນນາມຂອງເຮົາ ພວກເຂົາຈະປິ່ນປົວຄົນເຈັບປ່ວຍ, **ຄພ** 84:68.

ພວກເຮົາເຊື່ອໃນຂອງປະທານແຫ່ງການຮັກສາ, **ຫຼຊ** 1:7.

**ປີລາດ, ປົນຕິໂອ**

ຜູ້ປົກຄອງຊາວໂຣມໃນຢູດາຍ, ຄ.ສ. 26–36 (ລກ 3:1). ເພິ່ນກຽດຊັງຊາວຢິວ ແລະ ສາດສະໜາຂອງເຂົາ ແລະ ໄດ້ສັ່ງຂ້າຊາວຄາລີເລບາງຈຳນວນ (ລກ 13:1). ພຣະເຢຊູໄດ້ຖືກກ່າວຫາ ແລະ ໄດ້ຖືກສັ່ງໃຫ້ນຳໄປຄຶງ ຕອນທີ່ຢູ່ຕໍ່ໜ້າປີລາດ (ມທ 27:2, 11–26, 58–66; ມຣກ 15; ລກ 23; ຢຮ 18:28–19:38).

**ປຶ້ມພຣະບັນຍັດ.** *ເບິ່ງ* ຄຳສອນ ແລະ ພັນທະສັນຍາ; ເປີດເຜີຍ, ການເປີດເຜີຍ *ນຳອີກ*

ໃນປີ 1833, ຈຳນວນຂອງການເປີດເຜີຍທີ່ຮັບໂດຍສາດສະດາໂຈເຊັບ ສະມິດ ຖືກຕຽມໄວ້ສຳລັບການຈັດພິມໃນປຶ້ມທີ່ມີຊື່ວ່າ A Book of Commandments for the Government of the Church of Christ (ປຶ້ມພຣະບັນຍັດ ເພື່ອການປົກຄອງສາດສະໜາຈັກຂອງພຣະຄຣິດ). ພຣະຜູ້ເປັນເຈົ້າໄດ້ສືບຕໍ່ສື່ສານກັບຜູ້ຮັບໃຊ້ຂອງພຣະອົງ, ແລະ ການເປີດເຜີຍຢ່າງຫລວງຫລາຍທີ່ຖືກຮວບຮວມໄວ້ໄດ້ຖືກຈັດພິມສອງປີຈາກນັ້ນ ເປັນພຣະຄຳພີຄຳສອນ ແລະ ພັນທະສັນຍາ.

ຄພ 1 ເປັນຄຳນຳຂອງພຣະຜູ້ເປັນເຈົ້າໃຫ້ກ່າຍໜັງສືພຣະບັນຍັດຂອງພຣະອົງ, **ຄພ** 1:6. ພຣະຜູ້ເປັນເຈົ້າໄດ້ທ້າທາຍຄົນທີ່ສະຫລາດທີ່ສຸດໃຫ້ກ່າຍເອົາຂໍ້ຄວາມສ່ວນໜ້ອຍໜຶ່ງຂອງການເປີດເຜີຍຂອງພຣະອົງໃນປຶ້ມພຣະບັນຍັດ, **ຄພ** 67:4–9. ຜູ້ພິທັກຮັກສາໄດ້ຖືກກຳນົດໄວ້ເພື່ອໃຫ້ຈັດພິມການເປີດເຜີຍ, **ຄພ** 70:1–5.

**ປຶ້ມແຫ່ງຄວາມຊົງຈຳ.** *ເບິ່ງ* ລຳດັບການສືບເຊື້ອສາຍ; ໜັງສືທະບຽນແຫ່ງຊີວິດ *ນຳອີກ*

ໜັງສືທີ່ອາດາມໄດ້ເລີ່ມຂຽນ ຊຶ່ງໄດ້ບັນທຶກວຽກງານຂອງລູກຫລານຂອງເພິ່ນໄວ້; ມີບັນທຶກອື່ນອີກທີ່ຄ້າຍຄືກັນນີ້ທີ່ຖືກຮັກສາໄວ້ໂດຍສາດສະດາ ແລະ ສະມາຊິກທີ່ຊື່ສັດນັບແຕ່ເວລານັ້ນມາ. ອາດາມ ແລະ ລູກຫລານຂອງເພິ່ນໄດ້ຮັກສາປຶ້ມແຫ່ງຄວາມຊົງຈຳ, ຊຶ່ງໃນນັ້ນເຂົາເຈົ້າໄດ້ຂຽນດ້ວຍວິນຍານແຫ່ງການດົນໃຈ, ແລະ ໜັງສືຂອງຄົນລຸ້ນຕ່າງໆ, ຊຶ່ງບັນທຶກລຳດັບການສືບເຊື້ອສາຍ (ມຊ 6:5, 8). ບັນທຶກເຊັ່ນນີ້ອາດມີສ່ວນໃນການພິຈາລະນາການພິພາກສາຄັ້ງສຸດທ້າຍຂອງເຮົາ.

ປຶ້ມແຫ່ງຄວາມຊົງຈຳໄດ້ຖືກຂຽນໄວ້, **ມລກ** 3:16–18 (3 ນຟ 24:16–18).

ທຸກຄົນທີ່ບໍ່ໄດ້ຖືກພົບເຫັນວ່າມີຂຽນໄວ້ຢູ່ໃນປຶ້ມແຫ່ງຄວາມຊົງຈຳຈະບໍ່ພົບມູນມໍລະດົກໃນວັນນັ້ນ, **ຄພ** 85:9. ຄົນທີ່ຕາຍແລ້ວກໍຖືກຕັດສິນຕາມການກະທຳຂອງພວກເຂົາດັ່ງທີ່ມີ

ບັນທຶກໄວ້ໃນໜັງສືເຫລົ່ານັ້ນ, **ຄພ** 128:7. ໃຫ້ພວກເຮົາຖວາຍໜັງສືເຫລັ້ມໜຶ່ງທີ່ມີບັນທຶກຂອງຄົນຕາຍຂອງພວກເຮົາ, **ຄພ** 128:24.

ປຶ້ມແຫ່ງຄວາມຊົງຈຳຖືກຮັກສາໄວ້, **ມຊ** 6:5–8. ພວກເຮົາມີປຶ້ມແຫ່ງຄວາມຊົງຈຳ, **ມຊ** 6:46. ອັບຣາຮາມໄດ້ພະຍາຍາມຂຽນບັນທຶກໄວ້ໃຫ້ລູກຫລານຂອງເພິ່ນ, **ອຣຮ** 1:31.

**ເປັນສັດຕູກັນ, ຄວາມເປັນສັດຕູກັນ.** *ເບິ່ງ* ແກ້ແຄ້ນ, ການແກ້ແຄ້ນ; ອິດສາ; ຮັກ, ຄວາມຮັກ *ນຳອີກ*

ໃນພຣະຄຳພີ, ຄວາມເປັນສັດຕູກັນ, ການມີເຈດຕະນາຮ້າຍ, ແລະ ຄວາມກຽດຊັງ.

ເຮົາຈະໃຫ້ເຈົ້າກັບຍິງນັ້ນກຽດຊັງກັນ, **ປຖກ** 3:15 (ມຊ 4:21).

ຈິດໃຈແຫ່ງການມະລົນເປັນສັດຕູຕໍ່ພຣະເຈົ້າ, **ຣມ** 8:7. ການເປັນມິດຕໍ່ໂລກຄືການເປັນສັດຕໍ່ພຣະເຈົ້າ, **ຢກບ** 4:4.

ໃນວັນນັ້ນຄວາມກຽດຊັງຈະໝົດໄປຢູ່ຕໍ່ໜ້າເຮົາ, **ຄພ** 101:26.

**ເປັນດັ່ງພຣະເຈົ້າ.** *ເບິ່ງ* ສູງສົ່ງ, ຄວາມສູງສົ່ງ; ຊີວິດນິລັນດອນ; ມະນຸດ—ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ

**ເປັນພະຍານ.** *ເບິ່ງ* ປະຈັກພະຍານ *ນຳອີກ*

ການສະແດງເປັນພະຍານ ໂດຍອຳນາດຂອງພຣະວິນຍານບໍລິສຸດ; ການປະກາດທີ່ໜັກແໜ້ນກ່ຽວກັບຄວາມຈິງ ອີງຕາມຄວາມຮູ້ ຫລື ຄວາມເຊື່ອຖືຂອງບຸກຄົນ.

ພຣະຜູ້ປອບໂຍນຈະເປັນພະຍານໃຫ້ແກ່ເຮົາ, **ຢຮ** 15:26. ພຣະອົງໄດ້ສັ່ງພວກຂ້າພະເຈົ້າໃຫ້ປະກາດ ແລະ ເປັນພະຍານ, **ກຈກ** 10:42.

ພະຍານສາມຄົນຈະໃຫ້ຖ້ອຍຄຳເຖິງຄວາມຈິງ, **2 ນຟ** 27:12. ອຳນາດຂອງພຣະວິນຍານບໍລິສຸດຍ່ອມນຳຄຳເວົ້າໄປຫາໃຈຂອງລູກຫລານມະນຸດ, **2 ນຟ** 33:1. ພຣະຄຳພີເປັນພະຍານເຖິງພຣະຄຣິດ, **ຢຄ** 7:10–11 (ຢຮ 5:39). ຂ້າພະເຈົ້າຂໍເປັນພະຍານຕໍ່ພວກທ່ານວ່າ ຂ້າພະເຈົ້າຮູ້ເລື່ອງເຫລົ່ານີ້ທີ່ຂ້າພະເຈົ້າເວົ້າມາແລ້ວວ່າເປັນຄວາມຈິງ, **ແອວ** 5:45 (ແອວ 34:8).

ພວກເຈົ້າຈະເປັນພະຍານເຖິງສິ່ງເຫລົ່ານັ້ນໂດຍອຳນາດຂອງພຣະເຈົ້າ, **ຄພ** 17:3–5. ສິ່ງຊຶ່ງພຣະວິນຍານເປັນພະຍານແກ່ເຈົ້າ, ໃຫ້ເຈົ້າເຮັດ, **ຄພ** 46:7. ເຮົາສົ່ງພວກເຈົ້າອອກໄປເປັນພະຍານ ແລະ ເຕືອນ, **ຄພ** 88:81.

**ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ນຳອີກ*

ການກາຍເປັນອັນໜຶ່ງດຽວກັນໃນຄວາມຄິດ, ໃນຄວາມປາດຖະໜາ, ແລະ ໃນຈຸດປະສົງ, ທຳອິດນຳພຣະບິດາຜູ້ສະຖິດຢູ່ໃນສະຫວັນ ແລະ ພຣະເຢຊູຄຣິດ, ແລະ ຈາກນັ້ນນຳໄພ່ພົນຂອງພຣະເຈົ້າຄົນອື່ນໆ.

ມັນເປັນການດີທີ່ປະຊາຊົນຢູ່ຮ່ວມກັນດ້ວຍຄວາມປອງດອງຢ່າງນີ້, **ພສສ** 133:1.

ເຮົາກັບພຣະບິດາກໍເປັນອັນໜຶ່ງດຽວກັນ, **ຢຮ** 10:30 (ຄພ 50:43). ພຣະເຢຊູໄດ້ອະທິຖານຂໍໃຫ້ທຸກຄົນເປັນອັນໜຶ່ງດຽວກັນ ເຊັ່ນດຽວກັບພຣະອົງກັບພຣະບິດາຂອງພຣະອົງ ທີ່ເປັນອັນໜຶ່ງດຽວກັນ, **ຢຮ** 17:11–23 (3 ນຟ 19:23). ເຮົາຂໍຮ້ອງພວກເຈົ້າທຸກຄົນໃຫ້ຖືກຕ້ອງປອງດອງກັນ ຢ່າຖືພັກຖືພວກ ຈົ່ງຮ່ວມເຂົ້າກັນເປັນອັນໜຶ່ງດຽວກັນ, **1 ກຣທ** 1:10.

ຈົ່ງຕັ້ງໃຈເດັດດ່ຽວ ແລະ ໃຈດຽວ, ສາມັກຄີກັນໃນທຸກສິ່ງທຸກຢ່າງ, **2 ນຟ** 1:21. ໄພ່ພົນຂອງພຣະເຈົ້າຄວນໃຫ້ໃຈຂອງພວກເຂົາຜູກພັນກັນໄວ້ໃນຄວາມເປັນອັນໜຶ່ງດຽວກັນ, **ມຊຢ** 18:21. ພຣະເຢຊູໄດ້ອະທິຖານສຳລັບຄວາມເປັນອັນໜຶ່ງດຽວກັນໃນບັນດາສານຸສິດຊາວນີໄຟຂອງພຣະອົງ, **3 ນຟ** 19:23. ສານຸສິດໄດ້ມາເຕົ້າໂຮມກັນເພື່ອອະທິຖານ ແລະ ຖືສິນອົດເຂົ້າຢ່າງເອົາຈິງເອົາຈັງ, **3 ນຟ** 27:1.

ພຣະບິດາ, ພຣະບຸດ, ແລະ ພຣະວິນຍານບໍລິສຸດ ເປັນອັນໜຶ່ງດຽວກັນ, **ຄພ** 20:27–28 (ຄພ 35:2; 50:43). ມັນເປັນໜ້າທີ່ຂອງເຈົ້າທີ່ຈະເຂົ້າຮ່ວມນຳສາດສະໜາຈັກທີ່ແທ້ຈິງ, **ຄພ**

23:7. ສິ່ງໃດກໍຕາມທີ່ພວກເຈົ້າຈະທູນຂໍດ້ວຍສັດທາ, ໂດຍການຮ່ວມກັນໃນຄຳອະທິຖານ, ແລ້ວພວກເຈົ້າຈະໄດ້ຮັບ, **ຄພ** 29:6. ຖ້າຫາກພວກເຈົ້າບໍ່ເປັນອັນໜຶ່ງດຽວກັນ ພວກເຈົ້າກໍບໍ່ແມ່ນຂອງເຮົາ, **ຄພ** 38:27.

ພຣະຜູ້ເປັນເຈົ້າໄດ້ເອີ້ນຜູ້ຄົນຂອງພຣະອົງວ່າ ຊີໂອນ ເພາະວ່າພວກເຂົາມີໃຈດຽວ ແລະ ມີຄວາມຄິດດຽວ, **ມຊ** 7:18.

## ເປໂຕ

ໃນພຣະຄຳພີໃໝ່, ແຕ່ກ່ອນເປໂຕມີຊື່ວ່າ ຊີເມໂອນ ຫລື ຊີໂມນ (2 ປຕ 1:1), ຊາວປະມົງແຫ່ງເບັດຊາອີດາ ອາໄສຢູ່ກາເປນາອູມກັບເມຍຂອງລາວ. ພຣະເຢຊູໄດ້ປິ່ນປົວແມ່ເຖົ້າຂອງເປໂຕ (ມຣກ 1:29–31). ເປໂຕໄດ້ຖືກເອີ້ນ ພ້ອມກັບອັນເດອາ ນ້ອງຊາຍຂອງລາວ ໃຫ້ເປັນສານຸສິດຂອງພຣະເຢຊູຄຣິດ (ມທ 4:18–22; ມຣກ 1:16–18; ລູກາ 5:1–11). ຊື່ອາຣັບຂອງລາວ, ເກຟາ, ໝາຍເຖິງ "ຜູ້ພະຍາກອນ" ຫລື "ຫີນ," ຊຶ່ງພຣະຜູ້ເປັນເຈົ້າໄດ້ຕັ້ງໃຫ້ລາວ (ຢຮ 1:40–42; ປຈສ, ຢຮ 1:42 [ພາກຫ້ອຍທ້າຍ]). ເຖິງແມ່ນວ່າພຣະຄຳພີໃໝ່ໄດ້ກ່າວເຖິງຄວາມອ່ອນແອທາງໂລກຂອງເປໂຕ, ແຕ່ມັນກໍສະແດງໃຫ້ເຫັນນຳອີກວ່າ ລາວໄດ້ເອົາຊະນະມັນ ແລະ ໄດ້ຖືກເຮັດໃຫ້ເຂັ້ມແຂງຂຶ້ນຜ່ານສັດທາຂອງລາວໃນພຣະເຢຊູຄຣິດ.

ເປໂຕໄດ້ສາລະພາບວ່າ ພຣະເຢຊູຄື ພຣະຄຣິດ ແລະ ພຣະບຸດຂອງພຣະເຈົ້າ (ຢຮ 6:68–69), ແລະ ພຣະຜູ້ເປັນເຈົ້າໄດ້ເລືອກລາວໃຫ້ຖືຂໍກະແຈຂອງອານາຈັກ ຢູ່ເທິງແຜ່ນດິນໂລກ (ມທ 16:13–19). ຢູ່ເທິງພູແຫ່ງການປ່ຽນສະພາບ, ເປໂຕໄດ້ເຫັນພຣະຜູ້ຊ່ວຍໃຫ້ລອດຕອນພຣະອົງປ່ຽນລັກສະນະ, ເຊັ່ນດຽວກັບໂມເຊ ແລະ ອີລາຍ (ເອລີຢາ) (ມທ 17:1–9).

ເປໂຕໄດ້ເປັນອັກຄະສາວົກຊັ້ນຜູ້ໃຫຍ່ໃນສະໄໝຂອງລາວ. ຫລັງຈາກການສິ້ນພຣະຊົນ, ການຟື້ນຄືນພຣະຊົນ, ແລະ ການສະເດັດຂຶ້ນສະຫວັນຂອງພຣະຜູ້ຊ່ວຍໃຫ້ລອດ, ລາວໄດ້ເອີ້ນສາດສະໜາຈັກໃຫ້ມາຮ່ວມກັນ ແລະ ໄດ້ເອີ້ນຄົນໃໝ່ໃຫ້ເປັນອັກຄະສາວົກແທນຢູດາອິສະກາຣິອົດ (ກຈກ 1:15–26). ເປໂຕ ແລະ ໂຢຮັນ ໄດ້ປິ່ນປົວຄົນເປ້ຍລ່ອຍມາແຕ່ເກີດ (ກຈກ 3:1–16) ແລະ ໄດ້ຖືກປ່ອຍອອກຈາກຄຸກຢ່າງມະຫັດສະຈັນ (ກຈກ 5:11–29; 12:1–19). ຜ່ານການປະຕິບັດສາດສະໜາກິດຂອງເປໂຕ, ພຣະກິດຕິຄຸນຈຶ່ງໄດ້ເປີດແກ່ຄົນຕ່າງຊາດເປັນເທື່ອທຳອິດ (ກຈກ 10–11). ໃນຍຸກສຸດທ້າຍ, ເປໂຕ, ພ້ອມດ້ວຍຢາໂກໂບ ແລະ ໂຢຮັນ, ໄດ້ລົງມາຈາກສະຫວັນ ແລະ ໄດ້ມອບຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ຂໍກະແຈໃນນັ້ນ ໃຫ້ແກ່ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ (ຄພ 27:12–13; 128:20).

*ສານສະບັບທຳອິດຂອງເປໂຕ:* ສານສະບັບທຳອິດ ໄດ້ຖືກຂຽນຈາກ "ບາບີໂລນ" (ບາງທີກຸງໂຣມ) ແລະ ໄດ້ຖືກສົ່ງໄປຫາໄພ່ພົນຂອງພຣະເຈົ້າ ໃນເຂດທີ່ທຸກວັນນີ້ເອີ້ນວ່າ ເອເຊຍມາຍເນີ ບໍ່ດົນຫລັງຈາກ ເນໂຣ ໄດ້ເລີ່ມຕົ້ນຂົ່ມເຫັງຊາວຄຣິດສະຕຽນ.

ບົດທີ 1 ກ່າວເຖິງບົດບາດທີ່ແຕ່ງຕັ້ງລ່ວງໜ້າຂອງພຣະຄຣິດ ໃນຖານະເປັນພຣະຜູ້ໄຖ່. ບົດທີ 2–3 ອະທິບາຍວ່າ ພຣະຄຣິດເປັນຫີນເສົາເອກຂອງສາດສະໜາຈັກ, ວ່າໄພ່ພົນຂອງພຣະເຈົ້າດຳລົງຖານະປະໂລຫິດຫລວງ, ແລະ ວ່າພຣະຄຣິດໄດ້ສັ່ງສອນດວງວິນຍານຢູ່ໃນຄຸກ. ບົດທີ 4–5 ອະທິບາຍວ່າ ເປັນຫຍັງພຣະກິດຕິຄຸນຈຶ່ງຖືກສິດສອນໃຫ້ແກ່ຄົນຕາຍ ແລະ ວ່າເປັນຫຍັງພວກແອວເດີຕ້ອງລ້ຽງດູຝູງແກະ.

*ສານສະບັບທີສອງຂອງເປໂຕ:* ບົດທີ 1 ຊັກຊວນໄພ່ພົນຂອງພຣະເຈົ້າ ໃຫ້ແນ່ໃຈເລື່ອງການເອີ້ນ ແລະ ການເລືອກ. ບົດທີ 2 ເຕືອນຕ້ານຄູສອນປອມ. ບົດທີ 3 ກ່າວເຖິງຍຸກສຸດທ້າຍ ແລະ ການສະເດັດມາຄັ້ງທີສອງຂອງພຣະຄຣິດ.

## ເປເຫລັກ

ໃນພຣະຄຳພີເດີມ, ລູກຊາຍຂອງເອເບ ແລະ ເປັນຫລ້ອນຂອງເຊມ. ໃນສະໄໝຂອງລາວ ຄົນໃນໂລກໄດ້ແບ່ງແຍກກັນ (ປຖກ 10:22–25).

**ແປພາສາ**

ການ ສະແດງ ຄວາມ ໝາຍ ຂອງ ແນວ ຄິດ ທີ່ມອບ ໃຫ້ໃນພາ ສາໜຶ່ງ ຊຶ່ງມີຄວາມໝາຍ ເໝືອນກັນໃນອີກພາສາໜຶ່ງ (ມຊຢ 8:8–13; ຫູຊ 1:8). ໃນພຣະຄຳພີ ສ່ວນຫລາຍມັນໝາຍ ເຖິງ ຂອງປະທານຈາກພຣະເຈົ້າ (ແອວ 9:21; ຄພ 8; 9:7–9). ບາງເທື່ອມັນໝາຍຄວາມວ່າ ການພັດທະນາ ຫລື ການດັດແປງການແປ ຫລື ຕໍ່ເຕີມຖ້ອຍຄຳທີ່ເສຍໄປ (ຄພ 45:60–61). ໂຈເຊັບ ສະມິດ ໄດ້ຖືກບັນຊາໃຫ້ແປ ການແປ ພຣະຄຣິສຕະທຳຄຳພີຂອງກະສັດເຈມສ໌ທີ່ດົນໃຈ (ຄພ 42:56; 76:15).

ໂຈເຊັບ ສະມິດ ມີອຳນາດທີ່ຈະແປ ຜ່ານ ຄວາມເມດຕາຂອງພຣະເຈົ້າ, ໂດຍອຳນາດ ຂອງພຣະເຈົ້າ, **ຄພ** 1:29. ເຈົ້າມີຂອງປະທານ ເພື່ອແປ, **ຄພ** 5:4. ເຮົາໄດ້ມອບຂອງປະທານ ໃຫ້ແກ່ເຈົ້າ, ຖ້າເຈົ້າປາດຖະໜາຈາກເຮົາ, ເພື່ອແປ, **ຄພ** 6:25. ພຣະເຈົ້າໄດ້ປະທານ ອຳນາດຈາກເບື້ອງບົນໃຫ້ແກ່ໂຈເຊັບ ສະມິດ ເພື່ອແປພຣະຄຳພີມໍມອນ, **ຄພ** 20:8.

ໂດຍການໃຊ້ອຸລີມ ແລະ ທູມມີມ ຂ້າພະເຈົ້າ ໄດ້ແປອັກຂະລະຈຳນວນໜຶ່ງ, **ຈສ—ປ** 1:62 (ມຊຢ 8:13; 28:13).

**ປົກຄອງ, ການປົກຄອງ.** *ເບິ່ງ* ລັດຖະທຳມະນູນ *ນຳອີກ*

ເມື່ອພຣະເຢຊູຄຣິດສະເດັດຄືນມາ, ພຣະອົງ ຈະສະຖາປະນາການປົກຄອງທີ່ຊອບທຳຂຶ້ນ.

ພຣະອົງຈະເປັນຜູ້ປົກຄອງພວກເຮົາ, **ອຊຢ** 9:6 (2 ນຟ 19:6).

ສິ່ງ ທີ່ ເປັນ ຂອງກາຍ ຊາ ຈົ່ງ ຄືນ ໃຫ້ ແກ່ ກາຍຊາ, **ມທ** 22:21 (ຄພ 63:26). ທຸກຄົນ ຕ້ອງຍອມຢູ່ໃຕ້ອຳນາດການປົກຄອງ, **ຣມ** 13:1. ຈົ່ງອະທິຖານເພື່ອບັນດາຜູ້ນຳປະເທດ, **1 ຕມທ** 2:1–2. ຈົ່ງເຕືອນສະຕິເຂົາໃຫ້ຢູ່ໃຕ້ ບັງຄັບຜູ້ປົກຄອງ ແລະ ຜູ້ມີອຳນາດ, **ຕຕ** 3:1. ເພາະເຫັນແກ່ພຣະຜູ້ເປັນເຈົ້າ, ເຈົ້າທັງຫລາຍ ຈົ່ງຍອມຢູ່ໃຕ້ຂໍ້ບັງຄັບທຸກຢ່າງທີ່ມະນຸດຕັ້ງໄວ້, **1 ປຕ** 2:13–14. ໂລກນີ້ເປັນກຳມະສິດຂອງ ພຣະເຢຊູຄຣິດ, **ພນມ** 11:15.

ໃຫ້ຄົນທັງງທຳເປັນກະສັດຂອງພວກທ່ານ, **ມຊຢ** 23:8. ຈົ່ງເຮັດທຸລະກິດຂອງພວກທ່ານ ໂດຍການອອກສຽງຂອງຜູ້ຄົນ, **ມຊຢ** 29:26.

ພຣະຄຣິດຈະເປັນຜູ້ປົກຄອງຂອງເຮົາເມື່ອ ພຣະອົງສະເດັດມາ, **ຄພ** 41:4. ຜູ້ທີ່ຮັກສາກົດ ຂອງພຣະເຈົ້າບໍ່ຈຳເປັນຕ້ອງຝ່າຝືນກົດຂອງ ແຜ່ນດິນ, **ຄພ** 58:21. ເມື່ອຄົນຊົ່ວປົກຄອງ, ຜູ້ ຄົນຈະໂສກເສົ້າ, **ຄພ** 98:9–10. ການປົກຄອງ ໄດ້ຖືກຈັດຕັ້ງໂດຍພຣະເຈົ້າເພື່ອຜົນປະໂຫຍດ ຂອງມະນຸດຊາດ, **ຄພ** 134:1–5. ມະນຸດຖືກ ຜູກມັດໃຫ້ສະໜັບສະໜູນ ແລະ ສົ່ງເສີມການ ປົກຄອງ, **ຄພ** 134:5.

ພວກເຮົາເຊື່ອໃນການຂຶ້ນຢູ່ກັບກະສັດ, ປະ ທານາທິບໍດີ, ຜູ້ປົກຄອງ, ແລະ ຜູ້ພິພາກສາ, **ຫຼຊ** 1:12.

**ປົດບາບ, ການປົດບາບ.** *ເບິ່ງ* ກັບໃຈ, ການ ກັບໃຈ; ຊົດໃຊ້, ການຊົດໃຊ້; ພຣະເຢຊູ ຄຣິດ; ອະໄພ, ໃຫ້ອະໄພ *ນຳອີກ*

ການໃຫ້ອະໄພສຳລັບການເຮັດສິ່ງທີ່ບໍ່ຖືກ ຕ້ອງ ຕາມເງື່ອນໄຂຂອງການກັບໃຈ. ການ ປົດບາບແມ່ນຖືກເຮັດໃຫ້ເປັນໄປໄດ້ໂດຍການ ຊົດໃຊ້ຂອງພຣະເຢຊູຄຣິດ. ບຸກຄົນຈະໄດ້ຮັບ ການປົດບາບ ຖ້າຫາກເຂົາມີສັດທາໃນພຣະ ຄຣິດ, ກັບໃຈຈາກບາບຂອງຕົນ, ຮັບເອົາພິທີ ການຕ່າງໆຂອງການບັບຕິສະມາ ແລະ ການ ວາງມືສຳລັບຂອງປະທານແຫ່ງພຣະວິນຍານ ບໍລິສຸດ, ແລະ ການເຊື່ອຟັງຕໍ່ພຣະບັນຍັດຂອງ ພຣະເຈົ້າ (ຫຼຊ 1:3–4).

ເຖິງແມ່ນວ່າບາບຂອງພວກເຈົ້ານັ້ນເປັນສີ ແດງເຂັ້ມ ແຕ່ເຮົາກໍຈະຊຳລະໃຫ້ຂາວສະອາດ ດັ່ງຫິມະ, **ອຊຢ** 1:16–18.

ນີ້ແຫລະ ແມ່ນເລືອດຂອງເຮົາ ຊຶ່ງເປັນເລືອດ ທີ່ຫລັ່ງໄຫລອອກເພື່ອຄວາມຜິດບາບຈະໄດ້ຮັບ ການອະໄພ, **ມທ** 26:28 (ຮຣ 9:22–28; ຄພ 27:2). ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ ແລະ ຮັບບັບຕິສະມາ ເພື່ອວ່າບາບກຳຈະໄດ້ຮັບການອະໄພ, **ກຈກ** 2:38 (ລກ 3:3; ຄພ 107:20). ທຸກຄົນທີ່ເຊື່ອໃນ ພຣະເຢຊູ ຈະໄດ້ຮັບການອະໄພບາບກຳ, **ກຈກ** 10:43 (ມຊຢ 3:13).

ພຣະຄຣິດເປັນແຫລ່ງສຳລັບຄົນທີ່ຫລຽວຫາການປົດບາບ, **2 ນຟ** 25:26. ເພື່ອໃຫ້ມີການປົດບາບຂອງເຮົາ, ເຮົາຕ້ອງດູແລຄົນຍາກຈົນ ແລະ ຄົນຂັດສົນ, **ມຊຢ** 4:11–12, 26. ຜູ້ໃດກໍຕາມທີ່ກັບໃຈ ຈະມີສິດທິໃນຄວາມເມດຕາ, ໄປສູ່ການປົດບາບຂອງເຂົາ, **ແອວ** 12:34. ການເຮັດໃຫ້ພຣະບັນຍັດສຳເລັດນຳມາຊຶ່ງການປົດບາບ, **ມຣນ** 8:25.

ຖານະປະໂລຫິດແຫ່ງອາໂຣນຖືຂໍກະແຈຂອງການບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, **ຄພ** 13 (ຄພ 84:64, 74; ຫຼຊ 1:4). ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ຈື່ຈຳບາບຂອງພວກເຂົາອີກເລີຍ, **ຄພ** 58:42–43 (ອຊກ 18:21–22). ຄົນເຫລົ່ານີ້ໄດ້ຖືກສິດສອນເລື່ອງການບັບຕິສະມາແທນ ເພື່ອການປົດບາບ, **ຄພ** 138:33.

**ໂປໂລ.** *ເບິ່ງ* ສານຂອງໂປໂລ *ນຳອີກ*

ອັກຄະສາວົກໃນພຣະຄຳພີໃໝ່. ຊື່ເຮັບເຣີຂອງໂປໂລ ແມ່ນ ໂຊໂລ, ແລະ ລາວໄດ້ໃຊ້ຊື່ນີ້ ຈົນເຖິງເວລາທີ່ລາວໄດ້ເລີ່ມຕົ້ນພາລະກິດຂອງລາວໃນບັນດາຄົນຕ່າງຊາດ. ແຕ່ກ່ອນລາວໄດ້ຂົ່ມເຫັງສາດສະໜາຈັກ ແຕ່ພາຍລຸນມາໄດ້ປ່ຽນໃຈເຫລື້ອມໃສຕໍ່ຄວາມຈິງຂອງມັນ ຫລັງຈາກໄດ້ເຫັນພຣະເຢຊູຄຣິດຢູ່ໃນພາບນິມິດ. ໂປໂລໄດ້ເດີນທາງໄປສອນສາດສະໜາທີ່ສຳຄັນສາມເທື່ອ ແລະ ໄດ້ຂຽນຈົດໝາຍຫລາຍສະບັບ ເຖິງໄພ່ພົນຂອງພຣະເຈົ້າ. ຈົດໝາຍສິບສີ່ສະບັບເຫລົ່ານັ້ນໄດ້ຮວມເຂົ້າເປັນພາກສ່ວນໜຶ່ງໃນພຣະຄຳພີໃໝ່ ໃນທຸກວັນນີ້. ໃນທີ່ສຸດລາວໄດ້ຖືກສົ່ງໄປເຂົ້າຄຸກຢູ່ກຸງໂຣມ ແລະ ໄດ້ຖືກປະຫານຊີວິດ, ບາງທີອາດເປັນລະດູໃບໄມ້ປົ່ງຂອງ ຄ.ສ. 65.

ໄດ້ເຫັນຊອບກັບການແກວ່ງກ້ອນຫີນໃສ່ສະເຕຟາໂນ, **ກຈກ** 7:57–8:1. ໄດ້ຂົ່ມເຫັງໄພ່ພົນຂອງພຣະເຈົ້າ, **ກຈກ** 8:3. ພວມເດີນທາງໄປດາມັສກັດເມື່ອພຣະເຢຊູໄດ້ມາປະກົດຕໍ່ລາວ, **ກຈກ** 9:1–9. ໄດ້ຮັບບັບຕິສະມາຈາກອານາເນຍ, **ກຈກ** 9:10–18. ຫລັງຈາກໄດ້ໄປພັກເຊົາຢູ່ອາຣາເບຍ, ລາວໄດ້ກັບຄືນໄປດາມັສກັດເພື່ອສັ່ງສອນ, **ກຈກ** 9:19–25 (ຄລຕ 1:17). ຫລັງຈາກປ່ຽນໃຈເຫລື້ອມໃສໄດ້ສາມປີ, ລາວໄດ້ກັບຄືນໄປເຢຣູຊາເລັມ, **ກຈກ** 9:26–30 (ຄລຕ 1:18–19). ໄດ້ເດີນທາງໄປສອນສາດສະໜາສາມເທື່ອ, ສັ່ງສອນພຣະກິດຕິຄຸນ ແລະ ຈັດຕັ້ງສາຂາຂອງສາດສະໜາຈັກຫລາຍບ່ອນຂຶ້ນ ໃນຫລາຍພາກສ່ວນຂອງຈັກກະພັບໂຣມ, **ກຈກ** 13:1–14:26; 15:36–18:22; 18:23–21:15. ເມື່ອລາວໄດ້ກັບຄືນມາເຢຣູຊາເລັມຫລັງຈາກການໄປສອນສາດສະໜາເທື່ອທີສາມຂອງລາວ, ລາວໄດ້ຖືກຈັບ ແລະ ຖືກສົ່ງໄປກາຍຊາເຣຍ, **ກຈກ** 21:7–23:35. ໄດ້ຢູ່ໃນຄຸກທີ່ກາຍຊາເຣຍເປັນເວລາສອງປີ, **ກຈກ** 24:1–26:32. ໄດ້ຖືກສົ່ງໄປກຸງໂຣມເພື່ອຂຶ້ນສານ ແລະ ໄດ້ປະເຊີນກັບເຮືອຫລົ້ມໃນລະຫວ່າງການເດີນທາງ, **ກຈກ** 27:1–28:11.

**ເປີດເຜີຍ, ການເປີດເຜີຍ.** *ເບິ່ງ* ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ສຽງ; ດົນໃຈ, ການດົນໃຈ; ທຳນາຍ, ການທຳນາຍ, ຄຳທຳນາຍ; ຝັນ; ພຣະຄຳຂອງພຣະເຈົ້າ; ພຣະວິນຍານບໍລິສຸດ; ພາບນິມິດ *ນຳອີກ*

ການສື່ສານຈາກພຣະເຈົ້ານຳລູກໆຂອງພຣະອົງຢູ່ເທິງແຜ່ນດິນໂລກ. ການເປີດເຜີຍອາດມາເຖິງ ຜ່ານຄວາມສະຫວ່າງຂອງພຣະຄຣິດ ແລະ ພຣະວິນຍານບໍລິສຸດ ຜ່ານທາງການດົນໃຈ, ພາບທີ່ມາໃຫ້ເຫັນ, ຄວາມຝັນ, ຫລື ການມາຢ້ຽມຢາມຂອງທູດ. ການເປີດເຜີຍຈະໃຫ້ການນຳພາແກ່ຄົນຊອບທຳໄປສູ່ຄວາມລອດນິລັນດອນ ໃນອານາຈັກຊັ້ນສູງ.

ພຣະຜູ້ເປັນເຈົ້າເປີດເຜີຍວຽກງານຂອງພຣະອົງຕໍ່ສາດສະດາຂອງພຣະອົງ ແລະ ຢືນຢັນຕໍ່ຜູ້ທີ່ເຊື່ອ ວ່າການເປີດເຜີຍຕໍ່ສາດສະດາເປັນຄວາມຈິງ (ອມ 3:7). ຜ່ານການເປີດເຜີຍ, ພຣະຜູ້ເປັນເຈົ້າຈະໃຫ້ການນຳພາທຸກຄົນທີ່ສະແຫວງຫາການເປີດເຜີຍ ແລະ ຜູ້ມີສັດທາ, ກັບໃຈ, ແລະ ເຊື່ອຟັງຕໍ່ພຣະກິດຕິຄຸນ ຂອງພຣະເຢຊູຄຣິດ. “ພຣະວິນຍານບໍລິສຸດ ເປັນຜູ້ເປີດເຜີຍ,” ໂຈເຊັບ ສະມິດ ໄດ້ກ່າວ, ແລະ “ບໍ່

ມີມະນຸດຄົນໃດສາມາດໄດ້ຮັບພຣະວິນຍານບໍລິສຸດ ປາດສະຈາກການໄດ້ຮັບການເປີດເຜີຍ."

ໃນສາດສະໜາຈັກຂອງພຣະຜູ້ເປັນເຈົ້າ, ຝ່າຍປະທານສູງສຸດ ແລະ ກຸ່ມອັກຄະສາວົກສິບສອງເປັນສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍ ຕໍ່ສາດສະໜາຈັກ ແລະ ຕໍ່ໂລກ. ປະທານຂອງສາດສະໜາຈັກ ເປັນພຽງຜູ້ດຽວເທົ່ານັ້ນທີ່ພຣະເຈົ້າໄດ້ປະທານສິດອຳນາດໃຫ້ຮັບການເປີດເຜີຍ ສຳລັບສາດສະໜາຈັກ (ຄພ 28:2–7). ທຸກຄົນສາມາດໄດ້ຮັບການເປີດເຜີຍສຳລັບຜົນປະໂຫຍດຂອງຕົນເອງ.

ມະນຸດຈະບໍ່ໄດ້ລ້ຽງຊີວິດດ້ວຍອາຫານແຕ່ຢ່າງດຽວ ແຕ່ດ້ວຍທຸກຖ້ອຍຄຳທີ່ອອກມາຈາກປາກຂອງພຣະຜູ້ເປັນເຈົ້າ, **ພບຍ** 8:3 (ມທ 4:4; ຄພ 98:11). ພຣະຜູ້ເປັນເຈົ້າກ່າວດ້ວຍສຽງກະຊິບເບົາໆ, **1 ກສ** 19:12. ຊົນຊາດໃດທີ່ບໍ່ມີນິມິດ ຊົນຊາດນັ້ນກໍຈະຈິບຫາຍ, **ສພສ** 29:18. ຕາມຈິງແລ້ວ ອົງພຣະຜູ້ເປັນເຈົ້າບໍ່ໄດ້ເຮັດສິ່ງໃດ ໂດຍບໍ່ບອກແຈ້ງໃຫ້ຮູ້ລ່ວງໜ້າ ເຖິງແຜນການຂອງພຣະອົງແກ່ຜູ້ທຳນາຍ ຄືຜູ້ຮັບໃຊ້ຂອງພຣະອົງ, **ອມ** 3:7.

ຊີໂມນບາຣະໂຢນາເອີຍ ເຈົ້າກໍເປັນສຸກເພາະວ່າບໍ່ແມ່ນມະນຸດທີ່ເປີດຄວາມຈິງນີ້ໃຫ້ແກ່ເຈົ້າຮູ້, ແຕ່ແມ່ນພຣະບິດາຂອງເຮົາ, **ມທ** 16:15–19. ພຣະວິນຍານຈະນຳເຈົ້າທັງຫລາຍໄປສູ່ຄວາມຈິງທັງໝົດ ແລະ ຈະປະກາດໃຫ້ເຈົ້າທັງຫລາຍຮູ້ເຖິງສິ່ງເຫລົ່ານັ້ນທີ່ຈະເກີດຂຶ້ນ, **ຢຮ** 16:13. ຖ້າຄົນໃດໃນພວກເຈົ້າຂາດສະຕິປັນຍາ, ກໍໃຫ້ຜູ້ນັ້ນທູນຂໍຈາກພຣະເຈົ້າ, **ຢກບ** 1:5.

ທຸກເລື່ອງຈະຖືກເປີດເຜີຍ, **2 ນຟ** 27:11. ເຮົາຈະໃຫ້ແກ່ລູກຫລານມະນຸດເປັນບັນທັດ, **2 ນຟ** 28:30. ບໍ່ມີຫຍັງທີ່ເປັນຄວາມລັບ ທີ່ຈະບໍ່ຖືກເປີດເຜີຍ, **2 ນຟ** 30:17. ພຣະວິນຍານບໍລິສຸດຈະສະແດງທຸກຢ່າງແກ່ພວກທ່ານ, **2 ນຟ** 32:5. ບໍ່ມີຜູ້ໃດຈະຮູ້ຈັກທາງຂອງພຣະເຈົ້າ ນອກຈາກພຣະອົງຈະເປີດເຜີຍໃຫ້ຮູ້, **ຢຄ** 4:8. ແອວມາໄດ້ຖືສິນອົດເຂົ້າ ແລະ ອະທິຖານເພື່ອຈະໄດ້ຮັບການເປີດເຜີຍ, **ແອວ** 5:46. ສິ່ງທີ່ບໍ່ເຄີຍຖືກເປີດເຜີຍ ຈະຖືກເປີດເຜີຍໃຫ້ແກ່ຄົນທີ່ຊອບທຳ, **ແອວ** 26:22. ຄົນທີ່ປະຕິເສດການເປີດເຜີຍ ບໍ່ຮູ້ຈັກພຣະກິດຕິຄຸນຂອງພຣະເຢຊູຄຣິດ ແລະ ບໍ່ເຂົ້າໃຈພຣະຄຳພີ, **ມມ** 9:7–8. ທ່ານຈະບໍ່ໄດ້ຮັບພະຍານຈົນກວ່າຫລັງຈາກການທົດລອງສັດທາຂອງທ່ານ, **ອທ** 12:6.

ຄຳຂອງເຮົາຈະເກີດເປັນຈິງ, **ຄພ** 1:38. ເຮົາບໍ່ໄດ້ກ່າວໃຫ້ຄວາມສະຫງົບແກ່ຈິດໃຈຂອງເຈົ້າບໍກ່ຽວກັບເລື່ອງນີ້, **ຄພ** 6:22–23. ເຮົາຈະບອກເຈົ້າໃນຈິດໃຈ ແລະ ໃນຫົວໃຈຂອງເຈົ້າ, **ຄພ** 8:2–3. ຖ້າຫາກມັນຖືກຕ້ອງ ເຮົາຈະເຮັດໃຫ້ຊວງອົກຂອງເຈົ້າຮ້ອນຮົນ, **ຄພ** 9:8. ຢ່າປະຕິເສດພຣະວິນຍານແຫ່ງການເປີດເຜີຍ, **ຄພ** 11:25. ຄົນທີ່ທູນຂໍ ຈະໄດ້ຮັບການເປີດເຜີຍຕື່ມໃສ່ການເປີດເຜີຍ, **ຄພ** 42:61. ສິ່ງໃດກໍຕາມທີ່ພວກເຂົາຈະກ່າວເມື່ອໄດ້ຮັບການດົນໃຈໂດຍພຣະວິນຍານບໍລິສຸດ ຈະເປັນສຸລະສຽງຂອງພຣະຜູ້ເປັນເຈົ້າ, **ຄພ** 68:4. ພຣະເຈົ້າຈະມອບຄວາມຮູ້ໃຫ້ເຈົ້າ, **ຄພ** 121:26.

ໂຈເຊັບ ສະມິດ ໄດ້ເຫັນພຣະບິດາ ແລະ ພຣະບຸດ, **ຈສ—ປ** 1:17. ພວກເຮົາເຊື່ອທັງໝົດທີ່ພຣະເຈົ້າໄດ້ເປີດເຜີຍ ແລະ ຈະເປີດເຜີຍ, **ຫຼຊ** 1:7, 9.

**ປ່ຽນໃຈ, ການປ່ຽນໃຈເຫລື້ອມໃສ.** *ເບິ່ງ* ເກີດໃໝ່, ເກີດຈາກພຣະເຈົ້າ; ສານຸສິດ *ນຳອີກ*

ການປ່ຽນຄວາມເຊື່ອ, ຫົວໃຈ, ແລະ ຊີວິດຂອງບຸກຄົນ ເພື່ອຍອມຮັບ ແລະ ເຮັດໃຫ້ສອດຄ່ອງກັບພຣະປະສົງຂອງພຣະເຈົ້າ (ກຈກ 3:19).

ການປ່ຽນໃຈເຫລື້ອມໃສລວມທັງການຕັດສິນໃຈຢ່າງມີສະຕິ ເພື່ອເຊົາເຮັດສິ່ງທີ່ຜ່ານມາ ແລະ ປ່ຽນແປງ ເພື່ອກາຍເປັນສານຸສິດຂອງພຣະຄຣິດ. ການກັບໃຈ, ການບັບຕິສະມາເພື່ອການປົດບາບ, ການຮັບເອົາພຣະວິນຍານບໍລິສຸດ ໂດຍການວາງມື, ແລະ ມີສັດທາຕໍ່ໄປໃນພຣະຜູ້ເປັນເຈົ້າ ພຣະເຢຊູຄຣິດ ເຮັດໃຫ້ການປ່ຽນໃຈເຫລື້ອມໃສບໍລິບູນ. ມະນຸດທີ່ມີຈິດໃຈທຳມະດາຈະຖືກປ່ຽນແປງເຮັດໃຫ້ບຸກຄົນກາຍເປັນຄົນໃໝ່ ທີ່ໄດ້ຮັບການຊຳລະໃຫ້ບໍລິສຸດ

ແລະ ສະອາດ, ເກີດໃໝ່ໃນພຣະຄຣິດ ພຣະເຢຊູ (2 ກຣທ 5:17; ມຊຢ 3:19).

ຜູ້ຄົນຕ້ອງກັບ ໃຈ ແລະ ກາຍເປັນເໝືອນເດັກນ້ອຍ, **ມທ** 18:3 (ມຊຢ 3:19). ເມື່ອເຈົ້າກັບຄືນມາຫາເຮົາແລ້ວ ເຈົ້າຕ້ອງຊູແຮງບັນດາພີ່ນ້ອງຂອງເຈົ້າໄວ້, **ລກ** 22:32. ຄົນທີ່ຮັບເອົາພຣະຄຳຂອງພຣະອົງດ້ວຍຄວາມເຕັມໃຈ ໄດ້ຮັບບັບຕິສະມາ, **ກຈກ** 2:37–41. ຈົ່ງນຳຄົນບາບຄົນໜຶ່ງຕ່າວຄືນມາຈາກທາງທີ່ຜິດຂອງຕົນ, **ຢກບ** 5:20.

ເອໂນດໄດ້ປ່ຽນໃຈເຫລື້ອມໃສ, **ອນ** 1:2–5. ຖ້ອຍຄຳຂອງກະສັດເບັນຢາມິນໄດ້ເຮັດໃຫ້ມີການປ່ຽນແປງອັນໃຫຍ່ຫລວງໃນຜູ້ຄົນ, **ມຊຢ** 5:2 (ແອວ 5:12–14). ມະນຸດທັງປວງ, ຕ້ອງເກີດໃໝ່ເສຍກ່ອນ; ແທ້ຈິງແລ້ວ, ແມ່ນເກີດຈາກພຣະເຈົ້າ, **ມຊຢ** 27:25. ແອວມາ ແລະ ພວກລູກຊາຍຂອງໂມໄຊຢາໄດ້ປ່ຽນໃຈເຫລື້ອມໃສ, **ມຊຢ** 27:33–35. ບິດາຂອງລາໂມໄນໄດ້ປ່ຽນໃຈເຫລື້ອມໃສ, **ແອວ** 22:15–18. ໂດຍອຳນາດ ແລະ ພຣະຄຳຂອງພຣະເຈົ້າ, ພວກເຂົາຈຶ່ງປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ, **ແອວ** 53:10. ການກັບໃຈນັ້ນໄດ້ນຳການປ່ຽນແປງມາສູ່ໃຈ, **ຮລມ** 15:7. ຫລາຍຕໍ່ຫລາຍຄົນທີ່ປ່ຽນໃຈເຫລື້ອມໃສໄດ້ສະແດງວ່າພວກເຂົາໄດ້ຖືກຢ້ຽມຢາມໂດຍອຳນາດ ແລະ ພຣະວິນຍານຂອງພຣະເຈົ້າ, **3 ນຟ** 7:21. ເພາະສັດທາຂອງພວກເຂົາໃນພຣະຄຣິດໃນເວລາທີ່ພວກເຂົາປ່ຽນໃຈເຫລື້ອມໃສ, ພວກເຂົາຈຶ່ງໄດ້ຮັບບັບຕິສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດ, **3 ນຟ** 9:20.

ເຂົາຈະອອກໄປ ແລະ ສັ່ງສອນເຖິງການກັບໃຈ, ແລະ ຫລາຍຄົນຈະປ່ຽນໃຈເຫລື້ອໃສ, **ຄພ** 44:3–4.

**ຜະນຶກ, ການຜະນຶກ.** *ເບິ່ງ* ຖານະປະໂລຫິດ; ພິທີການ; ເອລີຢາ *ບຳອີກ*

ເພື່ອເຮັດໃຫ້ພິທີການທີ່ປະຕິບັດໂດຍສິດອຳນາດຂອງຖານະປະໂລຫິດຢູ່ໃນໂລກ ໃຊ້ການໄດ້ຢູ່ໃນສະຫວັນ. ພິທີການຕ່າງໆໄດ້ຖືກຜະນຶກເມື່ອມັນຖືກຮັບຮູ້ໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ, ຊຶ່ງເປັນພຣະວິນຍານບໍລິສຸດ.

ສິ່ງໃດທີ່ພວກເຈົ້າຜູກມັດໄວ້ເທິງແຜ່ນດິນໂລກນີ້ ສິ່ງນັ້ນຈະຖືກຜູກມັດໄວ້ໃນສະຫວັນ, **ມທ** 16:19 (ມທ 18:18; ຄພ 124:93; 132:46). ພວກເຈົ້າຖືກປະທັບຕາໝາຍໄວ້ ໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ, **ອຟຊ** 1:13.

ເຮົາໄດ້ໃຫ້ອຳນາດແກ່ເຈົ້າ, ຄືສິ່ງໃດທີ່ເຈົ້າຈະຜະນຶກເທິງແຜ່ນດິນໂລກນີ້ ສິ່ງນັ້ນຈະຖືກຜະນຶກໃນສະຫວັນ, **ຮລມ** 10:7.

ອຳນາດໄດ້ຖືກມອບໃຫ້ແກ່ພວກເຂົາເພື່ອຜະນຶກທັງເທິງແຜ່ນດິນໂລກ ແລະ ໃນສະຫວັນ, **ຄພ** 1:8. ຜູ້ທີ່ໄດ້ຮັບລັດສະໝີພາບຊັ້ນສູງ ໄດ້ຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ, **ຄພ** 76:50–70. ເອລີຢາມອບຂໍກະແຈ ທີ່ມີອຳນາດແຫ່ງການຜະນຶກໄວ້ໃນມືຂອງໂຈເຊັບ ສະມິດ, **ຄພ** 110:13–16. ນີ້ເປັນອຳນາດການຜະນຶກ ແລະ ການຜູກມັດ, **ຄພ** 128:14. ຄຳຂອງການທຳນາຍທີ່ແນ່ນອນແທ້ໆໝາຍເຖິງການທີ່ຮູ້ວ່າເຂົາຖືກຜະນຶກໄວ້ສູ່ຊີວິດນິລັນດອນ, **ຄພ** 131:5. ພັນທະສັນຍາທັງປວງທີ່ບໍ່ໄດ້ຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ ຈະສິ້ນສຸດລົງເມື່ອຄົນຕາຍໄປ, **ຄພ** 132:7. ວຽກງານອັນຍິ່ງໃຫຍ່ທີ່ຈະຕ້ອງເຮັດໃນພຣະວິຫານ ແມ່ນຮ່ວມດ້ວຍການຜະນຶກລູກໆເຂົ້າກັບພໍ່ແມ່ຂອງພວກເຂົາ, **ຄພ** 138:47–48.

**ຜິດຖຽງ.** *ເບິ່ງ* ຂັດແຍ້ງ, ການຂັດແຍ້ງ

**ຜູກມິດ.** *ເບິ່ງ* ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ; ຮັກ, ຄວາມຮັກ *ບຳອີກ*

ສຳລັບໄພ່ພົນຍຸກສຸດທ້າຍ, ການຜູກມິດຮ່ວມດ້ວຍການເປັນເພື່ອນທີ່ດີ, ການຮັບໃຊ້, ການເຊີດຊູ, ແລະ ການເພີ່ມຄວາມເຂັ້ມແຂງໃຫ້ແກ່ຄົນອື່ນ.

ຈົ່ງຮັກເພື່ອນມະນຸດເໝືອນຮັກຕົນເອງ, **ລລວ** 19:18 (ມທ 19:19; ຄພ 59:6).

ເມື່ອເຈົ້າກັບຄືນມາຫາເຮົາແລ້ວ ເຈົ້າຕ້ອງຊູແຮງບັນດາພີ່ນ້ອງຂອງເຈົ້າໄວ້, **ລກ** 22:32. ຖ້າພວກເຈົ້າຮັກຊຶ່ງກັນແລະກັນທຸກຄົນກໍຈະຮູ້

ວ່າພວກເຈົ້າເປັນສາວົກຂອງເຮົາ, **ຢຮ** 13:35. ຈົ່ງລ້ຽງແກະຂອງເຮົາ, **ຢຮ** 21:15–17. ພວກເຂົາໄດ້ວອນຂໍຢ່າງຫລວງຫລາຍ ຂໍໃຫ້ເຮົາກະລຸນາພວກເຂົາໄດ້ມີສ່ວນໃນການຊ່ວຍເຫລືອພວກໄພ່ພົນຂອງພຣະເຈົ້າ, **2 ກຣທ** 8:1–5. ພວກເຮົາກໍຮ່ວມສາມັກຄີທຳກັບພຣະບິດາ ແລະ ກັບພຣະບຸດຂອງພຣະອົງ, **1 ຢຮ** 1:3.

ຊາວນີໄຟ ແລະ ຊາວເລມັນໄດ້ຜູກສຳພັນທະໄມຕີຕໍ່ກັນ, **ຮລມ** 6:3.

ໃຫ້ທຸກໆຄົນນັບຖືອ້າຍນ້ອງຂອງຕົນເໝືອນດັ່ງຕົນເອງ, **ຄພ** 38:24–25. ຖ້າຫາກພວກເຈົ້າບໍ່ເປັນໜຶ່ງ ພວກເຈົ້າບໍ່ໄດ້ເປັນຂອງເຮົາ, **ຄພ** 38:27. ຂ້າພະເຈົ້າໄດ້ຮັບເອົາທ່ານເປັນເພື່ອນຮ່ວມສະມາຊິກ ເພື່ອເປັນເພື່ອນ ແລະ ອ້າຍນ້ອງຂອງທ່ານ, **ຄພ** 88:133.

**ຜູ້ຍິງ, ກຸ່ມຜູ້ຍິງ.** *ເບິ່ງ* ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ; ມະນຸດ; ເອື້ອຍນ້ອງ *ນຳອີກ*

ຜູ້ຍິງທີ່ໃຫຍ່ແລ້ວ, ທິດາຂອງພຣະເຈົ້າ. ຄຳວ່າ *ຜູ້ຍິງ* ບາງເທື່ອໄດ້ຖືກໃຊ້ໃນພຣະຄຳພີເປັນຕຳແໜ່ງທີ່ໜ້ານັບຖື (ຢຮ 19:26; ແອວ 19:10).

ພຣະເຈົ້າໄດ້ສ້າງຊາຍ ແລະ ຍິງ, **ປຖກ** 1:27 (ມຊ 2:27; 6:9; ອຣຮ 4:27). ຜູ້ຍິງທີ່ມີຄຸນນະທຳ ມີຄ່າເກີນກວ່າເພັດນິນຈິນດາ, **ສພສ** 31:10–31.

ຜູ້ຍິງເປັນກຽດຕິຍົດຂອງຜູ້ຊາຍ, **1 ກຣທ** 11:7. ຢູ່ໃນພຣະຜູ້ເປັນເຈົ້າ ຜູ້ຍິງກໍຕ້ອງເພິ່ງຜູ້ຊາຍ ແລະ ຜູ້ຊາຍກໍຕ້ອງເພິ່ງຜູ້ຍິງ, **1 ກຣທ** 11:11. ພວກຜູ້ຍິງຄວນແຕ່ງຕົວຢ່າງສຸພາບຮຽບຮ້ອຍ, **1 ຕມທ** 2:9–10.

ເຮົາ, ອົງພຣະຜູ້ເປັນເຈົ້າ, ຊື່ນຊົມໃນພົມມະຈັນຂອງຜູ້ຍິງ, **ຢຄ** 2:28.

ບາບຂອງເຈົ້າໄດ້ຖືກອະໄພໃຫ້ແລ້ວ, ແລະເຈົ້າເປັນສະຕີຜູ້ຖືກເລືອກ, **ຄພ** 25:3. ຜູ້ຍິງມີສິດທີ່ຈະໄດ້ຮັບການລ້ຽງດູຈາກສາມີຂອງພວກນາງ, **ຄພ** 83:2.

**ຜູ້ຕໍ່ຕ້ານພຣະຄຣິດ.** *ເບິ່ງ* ມານ *ນຳອີກ*

ຄົນໃດຄົນໜຶ່ງ ຫລື ສິ່ງໃດສິ່ງໜຶ່ງທີ່ບິດເບືອນແຜນແຫ່ງຄວາມລອດຂອງພຣະກິດຕິຄຸນທີ່ແທ້ຈິງ ແລະ ໄດ້ຕໍ່ຕ້ານພຣະຄຣິດຢ່າງເປີດແປນຫລື ແບບລີ້ລັບ. ໂຢຮັນຜູ້ເປີດເຜີຍໄດ້ບັນຍາຍກ່ຽວກັບຜູ້ຕໍ່ສູ້ພຣະຄຣິດວ່າເປັນຄົນຕົວະ (1 ຢຮ 2:18–22; 4:3–6; 2 ຢຮ 1:7). ຜູ້ຕໍ່ສູ້ພຣະຄຣິດຫລາຍທີ່ສຸດແມ່ນ ລູຊິເຟີ, ແຕ່ມັນມີບໍລິວານຫລາຍ, ທັງຜູ້ເປັນວິນຍານ ແລະ ຜູ້ເປັນມະນຸດ.

ບຸດແຫ່ງຄວາມຈິບຫາຍຕໍ່ຕ້ານ ແລະ ຍົກຕົນເອງຂຶ້ນເໜືອທຸກຄົນທີ່ເອີ້ນວ່າພຣະເຈົ້າ, **2 ທສນ** 2:1–12. ມັນຫລອກລວງຄົນທັງຫລາຍຢູ່ໃນໂລກດ້ວຍການເຮັດສິ່ງມະຫັດສະຈັນ, **ພນມ** 13:13–17.

ເຊເຣັມໄດ້ປະຕິເສດພຣະຄຣິດ ແລະ ໄດ້ຫລອກລວງຫລາຍຄົນ, **ຢຄ** 7:1–23. ນີຮໍໄດ້ສິດສອນຄຳສອນທີ່ຜິດ, ໄດ້ສະຖາປະນາສາດສະໜາຈັກຂຶ້ນ, ແລະ ໄດ້ແນະນຳອຳນາດຈອມປອມ, **ແອວ** 1:2–16. ໂຄຣິຫໍໄດ້ຫົວເຍາະເຍີ້ຍພຣະຄຣິດ, ການຊົດໃຊ້, ແລະ ວິນຍານແຫ່ງການທຳນາຍ, **ແອວ** 30:6–60.

**ຜູ້ທີ່ໄດ້ຖືກເຈີມໄວ້.** *ເບິ່ງ* ພຣະເມຊີອາ; ພຣະເຢຊູຄຣິດ *ນຳອີກ*

ພຣະເຢຊູຖືກເອີ້ນວ່າ *ພຣະຄຣິດ* (ພາສາກຣີກ) ຫລື *ພຣະເມຊີອາ* (ພາສາອາຣັບ). ທັງສອງຄຳໝາຍເຖິງ "ຜູ້ທີ່ໄດ້ຖືກເຈີມໄວ້." ພຣະອົງເປັນຜູ້ທີ່ໄດ້ຖືກເຈີມໄວ້ຂອງພຣະບິດາ ເພື່ອເປັນຕົວແທນໃຫ້ແກ່ພຣະບິດາໃນ ທຸກສິ່ງທັງປວງກ່ຽວກັບຄວາມລອດຂອງມະນຸດຊາດ.

ພຣະຜູ້ເປັນເຈົ້າໄດ້ຫົດສົງແຕ່ງຕັ້ງເຮົາໄວ້, **ອຊຢ** 61:1–3.

ພຣະອົງໄດ້ຫົດສົງແຕ່ງຕັ້ງຂ້ານ້ອຍໄວ້ໃຫ້ປະກາດຂ່າວປະເສີດ, **ລກ** 4:16–22. ພຣະເຢຊູໄດ້ຖືກຫົດສົງໄວ້ໂດຍພຣະເຈົ້າອົງເປັນພຣະບິດາ, **ກຈກ** 4:27. ພຣະເຈົ້າໄດ້ຫົດສົງພຣະເຢຊູໄທນາຊາເຣັດ, **ກຈກ** 10:38.

**ຜູ້ທີ່ຖືກເລືອກ.** *ເບິ່ງ* ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ *ນຳອີກ*

ຜູ້ທີ່ຖືກພຣະເຈົ້າເລືອກໄວ້ສຳລັບໜ້າທີ່ຮັບຜິດຊອບພິເສດ.

ເຮົາເຮັດຄຳໝັ້ນສັນຍາໄວ້ກັບຄົນທີ່ເຮົາໄດ້ເລືອກເອົາເຂົານັ້ນ, **ພສສ** 89:3.

ໄພ່ພົນຂອງພຣະເຈົ້າເປັນຊາດທີ່ຖືກເລືອກໄວ້, ເປັນປະໂລຫິດຫລວງ, **1 ປຕ** 2:9.

ພຣະຄຣິດເປັນພຣະບຸດທີ່ຮັກຂອງພຣະເຈົ້າ ແລະ ຖືກເລືອກໄວ້ແລ້ວຕັ້ງແຕ່ຕົ້ນ, **ມຊ** 4:2.

**ຜູ້ທີ່ນິຍົມກະສັດ**

ໃນພຣະຄຳພີມໍມອນ, ກຸ່ມໜຶ່ງທີ່ຢາກໂຄ່ນລົ້ມການປົກຄອງຂອງຊາວນີໄຟ (ແອວ 51:1–8).

**ຜູ້ທຳລາຍ.** *ເບິ່ງ* ມານ *ນຳອີກ*

ຊາຕານຄືຜູ້ທຳລາຍ.

ພຣະຜູ້ເປັນເຈົ້າຈະບໍ່ປ່ອຍໃຫ້ຜູ້ທຳລາຍເຂົ້າໄປໃນເຮືອນຂອງເຈົ້າ, **ອພຍ** 12:23.

ຜູ້ທຳລາຍເດີນທະຍານໄປເທິງໜ້ານ້ຳ, **ຄພ** 61:19. ຄົນຍາມສາມາດຮັກສາສວນອະງຸ່ນຂອງເຮົາຈາກຜູ້ທຳລາຍ, **ຄພ** 101:51–54.

**ຜູ້ປະກາດຂ່າວ.** *ເບິ່ງ* ປິຕຸ, ແຫ່ງປິຕຸ; ປິຕຸພອນ *ນຳອີກ*

ຜູ້ດຳລົງ ຫລື ປະກາດຂ່າວປະເສີດແຫ່ງພຣະກິດຕິຄຸນຂອງພຣະເຢຊູຄຣິດ. ໂຈເຊັບ ສະມິດ ໄດ້ສິດສອນວ່າຜູ້ມອບພອນເປັນປິຕຸ. ປິຕຸໄດ້ຖືກເອີ້ນ ແລະ ຖືກແຕ່ງຕັ້ງພາຍໃຕ້ການຊີ້ນຳຂອງອັກຄະສາວົກສິບສອງ ເພື່ອມອບພອນພິເສດທີ່ເອີ້ນວ່າປິຕຸພອນ.

ພຣະຜູ້ເປັນເຈົ້າເອີ້ນບາງຄົນເປັນອັກຄະສາວົກ, ແລະ ບາງຄົນເປັນສາດສະດາ, ແລະ ບາງຄົນເປັນຜູ້ປະກາດຂ່າວ, **ອຟຊ** 4:11. ຈົ່ງເຮັດໜ້າທີ່ຂອງຜູ້ປະກາດຂ່າວປະເສີດ, **2 ຕມທ** 4:5.

ພວກເຮົາເຊື່ອໃນອັກຄະສາວົກ, ສາດສະດາ, ສິດຍາພິບານ, ຄູສອນ, ຜູ້ປະກາດຂ່າວປະເສີດ, **ຫຼຊ** 1:6.

**ຜູ້ປົ້ລະປັກ.** *ເບິ່ງ* ມານ

**ຜູ້ພະຍາກອນ.** *ເບິ່ງ* ສາດສະດາ; ອຸລີມ ແລະ ທຸມມີມ *ນຳອີກ*

ບຸກຄົນທີ່ໄດ້ຮັບສິດອຳນາດຈາກພຣະເຈົ້າໃຫ້ເຫັນສິ່ງທີ່ພຣະເຈົ້າໄດ້ເຊື່ອງຊ້ອນຈາກໂລກ ດ້ວຍຕາທາງວິນຍານ (ມຊ 6:35–38). ເພິ່ນເປັນຜູ້ເປີດເຜີຍ ແລະ ສາດສະດາ (ມຊຢ 8:13–16). ໃນພຣະຄຳພີມໍມອນ, ອຳໂມນໄດ້ສອນວ່າ ພຽງແຕ່ຜູ້ພະຍາກອນເທົ່ານັ້ນ ທີ່ສາມາດໃຊ້ສິ່ງແປຄວາມໝາຍ, ຫລື ອຸລີມ ແລະ ທຸມມີມ (ມຊຢ 8:13; 28:16). ຜູ້ພະຍາກອນຮູ້ຈັກອະດີດ, ປະຈຸບັນ, ແລະ ອະນາຄົດ. ໃນສະໄໝບູຮານ, ສາດສະດາມັກຖືກເອີ້ນເລື້ອຍໆວ່າເປັນ ຜູ້ພະຍາກອນ (1 ຊມອ 9:9; 2 ຊມອ 24:11).

ໂຈເຊັບ ສະມິດ ເປັນຜູ້ພະຍາກອນທີ່ຍິ່ງໃຫຍ່ຂອງຍຸກສຸດທ້າຍ (ຄພ 21:1; 135:3). ນອກເໜືອຈາກນີ້, ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງ ຖືກສະໜັບສະໜູນເປັນສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍ.

ພວກເຂົາເປັນຄົນກະບົດທີ່ບອກພວກຜູ້ທຳນາຍໃຫ້ມິດງຽບ, **ອຊຢ** 30:9–10.

ເຮົາຈະຍົກຜູ້ພະຍາກອນທີ່ປະເສີດຜູ້ໜຶ່ງຂຶ້ນມາຈາກຜົນແອວຂອງເຈົ້າ, **2 ນຟ** 3:6–15.

ນີ້ຄືປັນຍາ; ແທ້ຈິງແລ້ວ, ຄືທີ່ຈະເປັນຜູ້ພະຍາກອນ, ຜູ້ເປີດເຜີຍ, ຜູ້ແປ, ແລະ ສາດສະດາ, **ຄພ** 107:92. ພຣະຜູ້ເປັນເຈົ້າໄດ້ກຳນົດໄຮຣຳ ສະມິດ ໃຫ້ເປັນສາດສະດາ, ຜູ້ພະຍາກອນ, ແລະ ຜູ້ເປີດເຜີຍຂອງສາດສະໜາຈັກ, **ຄພ** 124:91–94.

**ຜູ້ລ້ຽງ.** *ເບິ່ງ* ຜູ້ລ້ຽງທີ່ດີ; ພຣະເຢຊູຄຣິດ *ນຳອີກ*

ຕາມສັນຍາລັກແລ້ວ, ບຸກຄົນທີ່ເປັນຫ່ວງເປັນໃຍບຳລູກໆຂອງພຣະຜູ້ເປັນເຈົ້າ.

ພຣະຜູ້ເປັນເຈົ້າເປັນຜູ້ລ້ຽງຂອງຂ້ານ້ອຍ, **ພສສ** 23:1. ຜູ້ລ້ຽງແກະຄວນດູແລຝູງແກະ, **ອຊກ** 34:2–3.

**ຜູ້ລ້ຽງທີ່ດີ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ພຣະເຢຊູຄຣິດຄືຜູ້ລ້ຽງທີ່ດີ. ຕາມຄວາມປຽບທຽບແລ້ວ, ຜູ້ຕິດຕາມພຣະອົງເປັນເໝືອນດັ່ງແກະທີ່ພຣະເຢຊູດູແລ.

ພຣະຜູ້ເປັນເຈົ້າເປັນຜູ້ລ້ຽງຂ້າພຣະອົງ,

**ພສສ** 23:1. ພຣະອົງຈະລ້ຽງແກະຕົນດັ່ງຜູ້ລ້ຽງແກະຄົນໜຶ່ງ, **ອຊຢ** 40:11. ເຮົາກໍຈະນຳເອົາແກະທີ່ໄດ້ແຕກຝູງໄປກັບຄືນມາ, **ອຊກ** 34:12.

ເຮົານີ້ແຫລະເປັນຜູ້ລ້ຽງທີ່ດີ, **ຢຮ** 10:14–15. ພຣະເຢຊູຄືຜູ້ລ້ຽງແກະອົງໃຫຍ່, **ຮຣ** 13:20.

ພຣະອົງໄດ້ນັບຈຳນວນ ແກະ ຂອງພຣະອົງ ແລະ ພວກເຂົາຈະຮູ້ຈັກພຣະອົງ, **1 ນຟ** 22:25. ພຣະຜູ້ລ້ຽງທີ່ດີໄດ້ເອີ້ນຫາພວກທ່ານຢູ່, ນັ້ນຄືພຣະຄຣິດ, **ແອວ** 5:38, 60. ຈະເປັນຝູງດຽວກັນ, ແລະ ມີຜູ້ລ້ຽງພຽງແຕ່ຜູ້ດຽວ, **3 ນຟ** 15:21 (ຢຮ 10:16).

**ແຜນແຫ່ງການໄຖ່.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ຊົດໃຊ້, ການຊົດໃຊ້; ພຣະກິດຕິຄຸນ; ພຣະເຢຊູຄຣິດ; ລອດ, ຄວາມລອດ *ບຳອິກ*

ຄວາມສົມບູນຂອງພຣະກິດຕິຄຸນຂອງພຣະເຢຊູຄຣິດ, ໄດ້ຖືກຈັດຕັ້ງຂຶ້ນເພື່ອນຳຄວາມເປັນອະມະຕະ ແລະ ຊີວິດນິລັນດອນມາໃຫ້ມະນຸດ. ມັນລວມທັງການສ້າງ, ການຕົກ, ແລະ ການຊົດໃຊ້, ຕະຫລອດທັງກົດທຸກຂໍ້ທີ່ພຣະເຈົ້າໄດ້ປະທານໃຫ້, ພິທີການ, ແລະ ຄຳສອນ. ແຜນຂອງພຣະອົງເຮັດໃຫ້ເປັນໄປໄດ້ສຳລັບຜູ້ຄົນ ທີ່ຈະໄດ້ຮັບຄວາມສູງສົ່ງ ແລະ ຢູ່ນຳພຣະເຈົ້າຕະຫລອດການ (2 ນຟ 2; 9). ພຣະຄຳພີຍັງອ້າງເຖິງແຜນນີ້ ວ່າເປັນແຜນແຫ່ງຄວາມລອດ, ແຜນແຫ່ງຄວາມສຸກ, ແລະ ແຜນແຫ່ງຄວາມເມດຕາ.

ຍ້ອນການບາບຂອງພວກເຮົານັ້ນ ທ່ານຈຶ່ງໄດ້ຮັບບາດເຈັບ, **ອຊຢ** 53:5 (ມຊຢ 14:5).

ບໍ່ມີນາມອື່ນໃດທົ່ວໃຕ້ຟ້າ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ, **ກຈກ** 4:12. ຄົນທັງປວງໄດ້ຕາຍເພາະກ່ຽວເນື່ອງກັບອາດາມສັນໃດ ຄົນທັງປວງກໍຈະຖືກບັນດານໃຫ້ມີຊີວິດ ເພາະກ່ຽວເນື່ອງກັບພຣະຄຣິດສັນນັ້ນ, **1 ກຣທ** 15:22. ເຈົ້າທັງຫລາຍໄດ້ຖືກໂຜດໃຫ້ພົ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ, **ອຟຊ** 2:8 (2 ນຟ 25:23). ພຣະເຈົ້າໄດ້ສັນຍາເລື່ອງຊີວິດນິລັນດອນ ຕັ້ງແຕ່ດຶກດຳບັນ, **ຕຕ** 1:2. ພຣະເຢຊູເປັນຕົ້ນກຳເນີດແຫ່ງຄວາມລອດນິລັນດອນ, **ຮຣ** 5:8–9. ແຜນແຫ່ງການໄຖ່ໄດ້ຖືກມອບໃຫ້ແກ່ຄົນຕາຍ, **1 ປຕ** 3:18–20; 4:6 (ຄພ 138).

ຄວາມຕາຍເຮັດໃຫ້ແຜນທີ່ເຕັມໄປດ້ວຍຄວາມເມດຕາຂອງພຣະຜູ້ສ້າງຜູ້ຍິ່ງໃຫຍ່ສຳເລັດ, **2 ນຟ** 9:6. ແຜນຂອງພຣະເຈົ້າຂອງພວກເຮົາຍິ່ງໃຫຍ່ພຽງໃດ, **2 ນຟ** 9:13. ແຜນແຫ່ງການໄຖ່ພາໃຫ້ການຟື້ນຄືນຊີວິດ ແລະ ການປົດບາບເກີດຂຶ້ນ, **ແອວ** 12:25–34. ອາໂຣນໄດ້ສິດສອນບິດາຂອງລາໂມໄນກ່ຽວກັບແຜນແຫ່ງການໄຖ່, **ແອວ** 22:12–14. ແອມມິວເລັກໄດ້ອະທິບາຍແຜນແຫ່ງຄວາມລອດ, **ແອວ** 34:8–16. ແອວມາໄດ້ອະທິບາຍແຜນແຫ່ງຄວາມລອດ, **ແອວ** 42:5–26, 31.

ຄຳສອນຂອງການສ້າງ, ການຕົກ, ການຊົດໃຊ້, ແລະ ການບັບຕິສະມາ ຖືກຢືນຢັນຢູ່ໃນການເປີດເຜີຍຂອງສະໄໝປະຈຸບັນ, **ຄພ** 20:17–29. ແຜນໄດ້ຖືກແຕ່ງຕັ້ງໄວ້ກ່ອນໂລກມີມາ, **ຄພ** 128:22.

ວຽກງານ ແລະ ລັດສະໝີພາບຂອງພຣະເຮົາ ຄືການທີ່ຈະເຮັດໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39. ນີ້ຄືແຜນແຫ່ງຄວາມລອດເພື່ອມະນຸດທັງປວງ, **ມຊ** 6:52–62. ພວກເຮົາຈະພິສູດພວກເຂົາໂດຍວິທີນີ້, **ອຣຮ** 3:22–26.

**ແຜນແຫ່ງຄວາມລອດ.** *ເບິ່ງ* ແຜນແຫ່ງການໄຖ່

**ແຜ່ນຈາລຶກ.** *ເບິ່ງ* ແຜ່ນຈາລຶກຄຳ; ພຣະຄຳພີມໍມອນ *ບຳອິກ*

ໃນສະໄໝບູຮານ ຜູ້ຄົນໃນບາງບ່ອນໄດ້ຂຽນປະຫວັດສາດ ແລະ ບັນທຶກໄວ້ໃນແຜ່ນຈາລຶກທີ່ເຮັດດ້ວຍໂລຫະ, ຊຶ່ງເປັນຢ່າງນີ້ໃນກໍລະນີຂອງ ພຣະຄຳພີມໍມອນ. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເບິ່ງ "ບົດວິເຄາະໂດຍຫຍໍ້ກ່ຽວກັບພຣະຄຳພີມໍມອນ" ໃນໜ້າຄຳນຳຂອງພຣະຄຳພີມໍມອນ.

**ແຜ່ນຈາລຶກຄຳ.** *ເບິ່ງ* ແຜ່ນຈາລຶກ; ພຣະຄຳພີມໍມອນ *ບຳອິກ*

ບັນທຶກທີ່ຖືກຂຽນໄວ້ຢູ່ໃນແຜ່ນຈາລຶກຄຳ.

ມັນບອກເຖິງເລື່ອງລາວຂອງຄົນສອງເຜົ່າທີ່ຢູ່ໃນທະວີບອາເມຣິກາ. ໂຈເຊັບ ສະມິດ ໄດ້ແປ ແລະ ຈັດພິມພາກສ່ວນໜຶ່ງຂອງແຜ່ນຈາລຶກເຫລົ່ານີ້. ການແປດັ່ງກ່າວຖືກເອີ້ນວ່າ ພຣະຄຳພີມໍມອນ. (ສຳລັບລາຍລະອຽດເພີ່ມເຕີມ, ໃຫ້ເບິ່ງ "ຄຳນຳ" ແລະ "ປະຈັກພະຍານຂອງສາດສະດາໂຈເຊັບ ສະມິດ" ຢູ່ໃນທາງໜ້າຂອງພຣະຄຳພີມໍມອນ.)

**ແຜ່ນຈາລຶກທອງເຫລືອງ.** *ເບິ່ງ* ແຜ່ນຈາລຶກ *ບຳອີກ*

ບັນທຶກກ່ຽວກັບຊາວຢິວຕັ້ງແຕ່ຕົ້ນ ເຖິງ 600 ປີ ກ່ອນ ຄ.ສ., ບັນຈຸການຂຽນຫລາຍຢ່າງຂອງສາດສະດາ (1 ນຟ 5:10–16). ບັນທຶກນີ້ຖືກຮັກສາໄວ້ໂດຍລາບານ, ໜຶ່ງໃນບັນດາຜູ້ອາວຸໂສຊາວຢິວໃນເຢຣູຊາເລັມ. ໃນຂະນະທີ່ລີໄຮ ແລະ ຄອບຄົວຂອງເພິ່ນຢູ່ໃນຖິ່ນແຫ້ງແລ້ງກັນດານ, ລີໄຮໄດ້ສົ່ງລູກຊາຍຂອງເພິ່ນກັບຄືນໄປເຢຣູຊາເລັມ ເພື່ອໄປເອົາບັນທຶກນີ້ (1 ນຟ 3–4). (ສຳລັບຂໍ້ມູນເພີ່ມເຕີມ, ເບິ່ງ "ຄຳອະທິບາຍຫຍໍ້ກ່ຽວກັບພຣະຄຳພີມໍມອນ," ຊຶ່ງຢູ່ໃນພຣະຄຳພີມໍມອນ.)

**ແຜ່ນດິນໂລກ.** *ເບິ່ງ* ສ້າງ, ການສ້າງ; ໂລກ *ບຳອີກ*

ດາວພະເຄາະທີ່ເຮົາອາໄສຢູ່, ໄດ້ຖືກສ້າງຂຶ້ນໂດຍພຣະເຈົ້າຜ່ານພຣະເຢຊູຄຣິດ ເພື່ອໃຫ້ມະນຸດໃຊ້ໃນຊ່ວງຢູ່ໃນການທົດລອງທີ່ເປັນມະຕະ. ຈຸດໝາຍປາຍທາງຂອງມັນແມ່ນເພື່ອຈະໄດ້ຮຸ່ງເຫລື້ອມ ແລະ ສູງສົ່ງ (ຄພ 77:1–2; 130:8–9). ແຜ່ນດິນໂລກຈະກາຍເປັນມູນມໍລະດົກນິລັນດອນຂອງຜູ້ທີ່ດຳລົງຊີວິດຢ່າງມີຄ່າຄວນຕໍ່ລັດສະໝີພາບຊັ້ນສູງ (ຄພ 88:14–26). ເຂົາເຈົ້າຈະຊື່ນຊົມກັບທີ່ປະທັບຂອງພຣະບິດາ ແລະ ພຣະບຸດ (ຄພ 76:62).

*ໄດ້ຖືກສ້າງຂຶ້ນສຳລັບມະນຸດ:* ພຣະເຈົ້າໄດ້ມອບໃຫ້ມະນຸດຄອບຄອງທຸກສິ່ງເທິງແຜ່ນດິນໂລກ, **ປຖກ** 1:28 (ມຊ 2:28). ແຜ່ນດິນໂລກນີ້ເປັນຂອງພຣະຜູ້ເປັນເຈົ້າ, **ອພຍ** 9:29 (ພສສ 24:1). ພຣະຜູ້ເປັນເຈົ້າໄດ້ປະທານແຜ່ນດິນໂລກນີ້ໃຫ້ແກ່ມະນຸດ, **ພສສ** 115:16. ແມ່ນເຮົາທີ່ໄດ້ນິລະມິດສ້າງໂລກນີ້ຂຶ້ນມາ ແລະ ໄດ້ສ້າງມະນຸດທຸກຄົນໃຫ້ອາໄສຢູ່ໃນທີ່ນັ້ນ, **ອຊຢ** 45:12.

ໂດຍອຳນາດແຫ່ງພຣະຄຳຂອງພຣະອົງ ມະນຸດຈຶ່ງໄດ້ມາສູ່ແຜ່ນດິນໂລກ, **ຢຄ** 4:9.

ແຜ່ນດິນໂລກຈະຖືກມອບໃຫ້ຜູ້ຄົນທີ່ຮັບເອົາພຣະວິນຍານສັກສິດເພື່ອການນຳພາຂອງເຂົາເຈົ້າ, **ຄພ** 45:56–58 (ຄພ 103:7). ຜູ້ທີ່ເຊື່ອຟັງຕໍ່ພຣະກິດຕິຄຸນຈະໄດ້ຮັບສິ່ງທີ່ດີຂອງແຜ່ນດິນໂລກເປັນລາງວັນ, **ຄພ** 59:3. ຄົນຈົນ ແລະ ຄົນອ່ອນໂຍນຂອງແຜ່ນດິນໂລກຈະໄດ້ຮັບມັນເປັນມູນມໍລະດົກ, **ຄພ** 88:17 (ມທ 5:5; 3 ນຟ 12:5).

ພວກເຮົາຈະສ້າງແຜ່ນດິນໂລກ, ແລະ ພວກເຮົາຈະພິສູດມັນ, **ອຣຮ** 3:24–25.

*ສິ່ງທີ່ມີຕົນຕົວທີ່ມີຊີວິດຢູ່:* ໂລກກໍຍັງຢູ່ເປັນໂລກເໝືອນເດີມ, **ປຍຈ** 1:4.

ທະເລແກ້ວມະນີ ຄືແຜ່ນດິນໂລກ ໃນສະພາບທີ່ບໍລິສຸດ, ອະມະຕະ, ແລະ ນິລັນດອນຂອງມັນ, **ຄພ** 77:1. ແຜ່ນດິນໂລກຈະຕ້ອງໄດ້ຮັບການຊຳລະໃຫ້ບໍລິສຸດ ແລະ ຖືກຕຽມສຳລັບລັດສະໝີພາບຂອງຊັ້ນສູງ, **ຄພ** 88:18–19.

ແຜ່ນດິນໂລກເປັນທຸກອອກສຽງ, **ມຊ** 7:48.

*ການແບ່ງແຍກຂອງແຜ່ນດິນໂລກ:* ໃຫ້ນ້ຳມາເຕົ້າໂຮມກັນຢູ່ບ່ອນດຽວ, **ປຖກ** 1:9. ໃນສະໄໝຂອງເປເຫລັກ ຄົນໃນໂລກນີ້ໄດ້ແບ່ງແຍກກັນ, **ປຖກ** 10:25.

ຫລັງຈາກນ້ຳແຫ້ງລົງ, ມັນກໍກາຍມາເປັນແຜ່ນດິນທີ່ປະເສີດເລີດລ້ຳ, **ອທ** 13:2.

ແຜ່ນດິນໂລກຈະເປັນເໝືອນດັ່ງທີ່ມັນເຄີຍເປັນກ່ອນທີ່ມັນໄດ້ແຍກອອກຈາກກັນ, **ຄພ** 133:24.

*ການຊຳລະລ້າງແຜ່ນດິນໂລກ:* ຝົນໄດ້ຕົກເປັນເວລາສີ່ສິບມື້, **ປຖກ** 7:4.

ແຜ່ນດິນໂລກຈະຖືກຮັກສາໄວ້ສຳລັບໃຫ້ໄຟເຜົາຜານເສຍຈົນເຖິງວັນພິພາກສາ, **2 ປຕ** 3:7.

ຫລັງຈາກວັນນີ້ການເຜົາໄໝ້ຈະມາເຖິງ, **ຄພ** 64:24.

ແຜ່ນດິນໂລກປາດຖະໜາຢາກຖືກຊຳລະລ້າງຈາກຄວາມສົກກະປົກ, **ມຊ** 7:48.

*ພາວະສຸດທ້າຍຂອງແຜ່ນດິນໂລກ:* ແຜ່ນດິນໂລກຈະຫົດເຂົ້າດັ່ງມ້ວນກະດາດ ແລະ ຈະລ່ວງພົ້ນໄປ, **3 ນຟ** 26:3 (ຄພ 29:23). ມັນຈະເປັນສະຫວັນໃໝ່ ແລະ ແຜ່ນດິນໂລກໃໝ່, **ອທ** 13:9 (ຄພ 29:23).

ທະເລແກ້ວມະນີຄືແຜ່ນດິນໂລກໃນສະພາບທີ່ບໍ່ລິສຸດ, ອະມະຕະ, ແລະ ນິລັນດອນຂອງມັນ, **ຄພ** 77:1. ແຜ່ນດິນໂລກຈຳເປັນຕ້ອງໄດ້ຮັບການຊຳລະໃຫ້ບໍລິສຸດ ແລະ ຖືກຕຽມໄວ້ສຳລັບລັດສະໝີພາບຂອງຊັ້ນສູງ, **ຄພ** 88:18–19. ແຜ່ນດິນໂລກນີ້ຈະຖືກເຮັດໃຫ້ເປັນເໝືອນດັ່ງແກ້ວໃສ ແລະ ຈະເປັນອຸລີມ ແລະ ທຸມມີມ, **ຄພ** 130:8–9.

ເປັນເວລາໜຶ່ງພັນປີ ແຜ່ນດິນໂລກຈະພັກຜ່ອນ, **ມຊ** 7:64. ແຜ່ນດິນໂລກຈະຖືກເຮັດໃໝ່, **ຫຼຊ** 1:10.

**ແຜ່ນດິນແຫ່ງຄຳສັນຍາ**

ແຜ່ນດິນທີ່ພຣະຜູ້ເປັນເຈົ້າສັນຍາວ່າ ຈະປະທານໃຫ້ຜູ້ຕິດຕາມທີ່ຊື່ສັດຂອງພຣະອົງ, ແລະ ສ່ວນຫລາຍແລ້ວແມ່ນສຳລັບລູກຫລານຂອງເຂົາເຈົ້ານຳອີກ. ມີແຜ່ນດິນແຫ່ງຄຳສັນຍາຫລາຍບ່ອນ. ສ່ວນຫລາຍແລ້ວໃນພຣະຄຳພີມໍມອນ, ແຜ່ນດິນແຫ່ງຄຳສັນຍາທີ່ກ່າວເຖິງແມ່ນອາເມຣິກາ.

ນີ້ແມ່ນດິນແດນທີ່ເຮົາຈະມອບໃຫ້ແກ່ເຊື້ອສາຍຂອງເຈົ້າ, **ປຖກ** 12:7 (ອຣຣ 2:19). ເຮົາຈະມອບດິນແດນການາອານໃຫ້ແກ່ເຈົ້າ ແລະ ເຊື້ອສາຍຂອງເຈົ້າ, **ປຖກ** 17:8 (ປຖກ 28:13). ໂມເຊໄດ້ບອກຂອບເຂດດິນແດນສຳລັບຊາວອິດສະຣາເອນໃນການາອານ, **ຈບຊ** 34:1–12 (ຈບຊ 27:12).

ພວກເຈົ້າຈະຖືກພາໄປຫາແຜ່ນດິນແຫ່ງຄຳສັນຍາ, **1 ນຟ** 2:20 (1 ນຟ 5:5). ພຣະຜູ້ເປັນເຈົ້າໄດ້ນຳຄົນຊອບທຳໄປຫາແຜ່ນດິນທີ່ມີຄ່າ, **1 ນຟ** 17:38. ຖ້າຫາກລູກຫລານຂອງລີໄຮຮັກສາພຣະບັນຍັດຂອງພຣະເຈົ້າ, ແລ້ວພວກເຂົາຈະຮຸ່ງເຮືອງຢູ່ໃນແຜ່ນດິນແຫ່ງຄຳສັນຍາ, **2 ນຟ** 1:5–9. ຊາວອິດສະຣາເອນຈະກັບມາຫາແຜ່ນດິນແຫ່ງຄຳສັນຍາຂອງເຂົາ, **2 ນຟ** 24:1–2 (ອຊຢ 14:1–2). ຊາດໃດກໍຕາມທີ່ເປັນເຈົ້າຂອງແຜ່ນດິນແຫ່ງຄຳສັນຍານີ້ຄວນຮັບໃຊ້ພຣະເຈົ້າ, ຖ້າບໍ່ດັ່ງນັ້ນ ເຂົາຈະຖືກກວາດອອກໄປ, **ອທ** 2:9–12.

ນີ້ຄືແຜ່ນດິນແຫ່ງຄຳສັນຍາ, ແລະ ສະຖານທີ່ສຳລັບເມືອງຊີໂອນ, **ຄພ** 57:2. ຢູດາຈະເລີ່ມກັບໄປຍັງແຜ່ນດິນຂອງອັບຣາຮາມ, **ຄພ** 109:64.

ເຢຣູຊາເລັມໃໝ່ຈະຖືກສ້າງຂຶ້ນໃນທະວີບອາເມຣິກາ, **ຫຼຊ** 1:10.

**ແຜ່ນປົກເອິກ.** *ເບິ່ງ* ອຸລີມ ແລະ ທຸມມີມ
*ບຳອີກ*

ຂໍ້ພຣະຄຳພີກ່າວເຖິງແຜ່ນປົກເອິກສອງຊະນິດ: (1) ສ່ວນທາງໜ້າທີ່ປົກປ້ອງເສື້ອ ຫລືເຄື່ອງປ້ອງກັນຂອງທະຫານ. ໃນແບບເຄື່ອງໝາຍ, ໄພ່ພົນຂອງພຣະເຈົ້າຄວນສວມແຜ່ນປົກເອິກແຫ່ງຄວາມຊອບທຳ ເພື່ອປົກປ້ອງຕົນເອງຈາກຄວາມຊົ່ວຮ້າຍ (ອຊຢ 59:17; ອຟຊ 6:14). (2) ເສື້ອຜ້າຊັ້ນໜຶ່ງທີ່ມະຫາປະໂລຫິດນຸ່ງໃນ ກົດຂອງໂມເຊ (ອພຍ 28:13–30; 39:8–21). ມັນຖືກເຮັດດ້ວຍຜ້າລີນິນ ແລະ ປະດັບດ້ວຍກ້ອນຫີນທີ່ມີຄ່າສິບສອງເມັດ. ບາງເທື່ອກ່າວເຖິງໃນຄວາມກ່ຽວພັນກັບອຸລີມ ແລະ ທຸມມີມ (ຄພ 17:1; ຈສ—ປ 1:35, 42, 52).

**ຜົນທຳອິດ**

ຜົນລະປູກທຳອິດທີ່ເກັບກ່ຽວໃນລະດູ. ໃນສະໄໝຂອງພຣະຄຳພີເດີມ, ເຂົາເຈົ້າໄດ້ຖວາຍມັນໃຫ້ແກ່ພຣະຜູ້ເປັນເຈົ້າ (ລລວ 23:9–20). ພຣະເຢຊູຄຣິດເປັນຜົນທຳອິດຕໍ່ພຣະເຈົ້າເພາະໃນການນັ້ນພຣະອົງໄດ້ເປັນຜູ້ທຳອິດທີ່ຟື້ນຄືນພຣະຊົນ (1 ກຣທ 15:20, 23; 2 ນຟ 2:9). ຜູ້ທີ່ຮັບເອົາພຣະກິດຕິຄຸນ ແລະ ອົດທົນຈົນເຖິງທີ່ສຸດດ້ວຍຄວາມຊື່ສັດ ກໍເປັນສັນຍາລັກຂອງການເປັນຜົນທຳອິດ, ເພາະເຂົາເຈົ້າເປັນຂອງພຣະເຈົ້າ.

ຜູ້ທີ່ຕາມພຣະເມສານ້ອຍໄປເປັນຜົນທຳອິດທີ່ຖວາຍໃຫ້ແກ່ພຣະເຈົ້າ, **ພນມ** 14:4.

ຜູ້ທີ່ລົງໄປພ້ອມກັບພຣະຄຣິດກ່ອນ ເປັນຜົນທຳອິດ, **ຄພ** 88:98.

**ຜົວ, ສາມີ.** *ເບິ່ງ* ຄອບຄົວ; ແຕ່ງງານ, ການແຕ່ງງານ

**ເຜົ່າທີ່ສູນເສຍໄປ.** *ເບິ່ງ* ອິດສະຣາເອນ—ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ

**ຝັນ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ *ນຳອີກ*

ວິທີໜຶ່ງທີ່ພຣະເຈົ້າເປີດເຜີຍພຣະປະສົງຂອງພຣະອົງຕໍ່ຊາຍ ແລະ ຍິງຢູ່ເທິງແຜ່ນດິນໂລກ. ເຖິງຢ່າງໃດກໍຕາມ, ບໍ່ແມ່ນທຸກຄວາມຝັນຈະເປັນການເປີດເຜີຍ. ຄວາມຝັນທີ່ດົນໃຈແມ່ນໝາກຜົນຂອງສັດທາ.

ລາວໄດ້ຝັນເຫັນຂັ້ນໄດແຕ່ດິນຈົນຈຸຟ້າ, **ປຖກ** 28:12. ໂຢເຊັບໄດ້ຝັນ, **ປຖກ** 37:5. ພຣະຜູ້ເປັນເຈົ້າຈະກ່າວກັບລາວທາງຄວາມຝັນ, **ຈບຊ** 12:6. ເນບູກາດເນັດຊາໄດ້ຝັນຢ່າງໜຶ່ງ, **ດນອ** 2:1–3. ຜູ້ເຖົ້າຈະຝັນ, **ຢອ** 2:28 (ກຈກ 2:17).

ເທວະດາຕົນໜຶ່ງໄດ້ປະກົດຂຶ້ນຕໍ່ລາວໃນຄວາມຝັນ, **ມທ** 1:20 (ມທ 2:19).

ລີໄຮໄດ້ບັນທຶກໄວ້ຫລາຍເລື່ອງທີ່ເພິ່ນໄດ້ເຫັນໃນຄວາມຝັນ, **1 ນຟ** 1:16. ລີໄຮໄດ້ຝັນເຫັນເລື່ອງໜຶ່ງ, **1 ນຟ** 8.

**ຝ່າຍປະທານ.** *ເບິ່ງ* ຝ່າຍປະທານສູງສຸດ

**ຝ່າຍປະທານສູງສຸດ.** *ເບິ່ງ* ຂໍກະແຈຂອງຖານະປະໂລຫິດ; ປະທານ; ເປີດເຜີຍ, ການເປີດເຜີຍ *ນຳອີກ*

ປະທານຂອງສາດສະໜາຈັກ ແລະ ທີ່ປຶກສາຂອງເພິ່ນ. ພວກເພິ່ນເປັນກຸ່ມຂອງມະຫາປະໂລຫິດສາມຄົນ ແລະ ຄວບຄຸມສາດສະໜາຈັກທັງໝົດ. ຝ່າຍປະທານສູງສຸດຖືຂໍກະແຈຂອງຖານະປະໂລຫິດ.

ຂໍກະແຈຂອງອານາຈັກເປັນຂອງຝ່າຍປະທານຂອງຖານະປະໂລຫິດສູງສະເໝີໄປ, **ຄພ** 81:2. ຝ່າຍປະທານຂອງຖານະປະໂລຫິດສູງມີສິດທີ່ຈະປະຕິບັດໃນຕຳແໜ່ງທັງປວງ, **ຄພ** 107:9, 22. ຜູ້ໃດກໍຕາມທີ່ຮັບເອົາເຮົາ ກໍຮັບເອົາຝ່າຍປະທານສູງສຸດ, **ຄພ** 112:20, 30. ຝ່າຍປະທານສູງສຸດແມ່ນເພື່ອຮັບເອົາການເປີດເຜີຍແທນທັງສາດສະໜາຈັກ, **ຄພ** 124:126.

**ພະຍາດຂີ້ທູດ**

ເປັນພະຍາດແຜ່ລາມທີ່ຮ້າຍກາດ ຊຶ່ງກ່າວເຖິງໃນພຣະຄຳພີເດີມ ແລະ ພຣະຄຳພີໃໝ່. ຫລາຍຄົນທີ່ມີຊື່ສຽງຢູ່ໃນພຣະຄຣິສຕະທຳຄຳພີກໍຕິດພະຍາດນີ້ຄືກັນ, ລວມທັງໂມເຊ (ອພຍ 4:6–7), ເອື້ອຍຂອງເພິ່ນຊື່ ມີຣິອາມ (ຈບຊ 12:10), ນາອາມານ (2 ກສ 5), ແລະ ກະສັດອຸດສີຢາ (2 ຂຄ 26:19–21).

ພຣະເຢຊູໄດ້ປິ່ນປົວຄົນຂີ້ທູດຫລາຍຄົນ, **ມທ** 8:2–4 (ມຣກ 1:40–45; ລກ 5:12–15; 3 ນຟ 17:7–9). ພຣະເຢຊູໄດ້ປິ່ນປົວຄົນຂີ້ທູດສິບຄົນ, **ລກ** 17:11–19.

**ພະຍານ.** *ເບິ່ງ* ປະຈັກພະຍານ *ນຳອີກ*

ຄຳຖະແຫລງ ຫລື ຫລັກຖານອື່ນໆ ທີ່ບອກວ່າບາງສິ່ງເປັນຄວາມຈິງ; ປະຈັກພະຍານ. ພະຍານຍັງສາມາດເປັນບາງຄົນທີ່ໃຫ້ຄຳຖະແຫລງ ຫລື ຫລັກຖານ ອີງຕາມຄວາມຮູ້ສ່ວນຕົວຂອງຕົນ; ດັ່ງເຊັ່ນ, ບາງຄົນທີ່ສະແດງປະຈັກພະຍານ.

ຢ່າເປັນພະຍານບໍ່ຈິງ, **ອພຍ** 20:16.

ພຣະກິດຕິຄຸນຈະຖືກສັ່ງສອນໄປທົ່ວໂລກເພື່ອເປັນພະຍານຕໍ່ທຸກຊາດ, **ມທ** 24:14 (ຈສ—ມ 1:31). ພວກເຈົ້າຈະເປັນພະຍານໃຫ້ແກ່ເຮົາ, **ກຈກ** 1:8. ພຣະວິນຍານໄດ້ຮ່ວມເປັນພະຍານກັບວິນຍານຂອງພວກເຮົາ, **ຣມ** 8:16 (1 ຢຮ 5:6).

ພວກທ່ານເຕັມໃຈທີ່ຈະຢືນເປັນພະຍານຂອງພຣະເຈົ້າໃນທຸກເວລາ, **ມຊຢ** 18:8–9. ເຮົາຮັບສ່ວນສິບລະລຶກ ເພື່ອເປັນພະຍານຕໍ່ພຣະບິດາວ່າ ເຮົາຈະຮັກສາພຣະບັນຍັດ ແລະ ລະນຶກເຖິງພຣະເຢຊູຕະຫລອດເວລາ, **3 ນຟ** 18:10–11 (ມຣນ 4–5; ຄພ 20:77–79). ທ່ານ

ຈະບໍ່ໄດ້ຮັບພະຍານ ຈົນກວ່າຫລັງຈາກການທົດລອງສັດທາຂອງທ່ານ, **ອທ** 12:6.

ກົດຂອງການເປັນພະຍານ: ດ້ວຍປາກຂອງພະຍານສອງ ຫລື ສາມຄົນ ທຸກໆຄຳຈະຖືກສະຖາປະນາ, **ຄພ** 6:28 (ພບຍ 17:6; ມທ 18:16; 2 ກຣທ 13:1; ອທ 5:4; ຄພ 128:3). ເຮົາໄດ້ແຕ່ງຕັ້ງພວກເຈົ້າໃຫ້ເປັນອັກຄະສາວົກ ແລະ ເປັນພະຍານພິເສດເຖິງນາມຂອງເຮົາ, **ຄພ** 27:12 (ຄພ 107:23). ສາວົກເຈັດສິບໄດ້ຖືກເອີ້ນໃຫ້ເປັນພະຍານພິເສດຕໍ່ຄົນຕ່າງຊາດ ແລະ ໃນທົ່ວໂລກ, **ຄພ** 107:25. ໃຫ້ມີຜູ້ບັນທຶກ, ແລະ ໃຫ້ເຂົາເປັນພະຍານທີ່ເຫັນກັບຕາເຖິງການຮັບບັບຕິສະມາຂອງພວກເຈົ້າ, **ຄພ** 127:6 (ຄພ 128:2–4).

**ພະຍານຂອງພຣະຄຳພີມໍມອນ.** *ເບິ່ງ* ພະຍານ; ພຣະຄຳພີມໍມອນ *ນຳອີກ*

ພຣະຜູ້ເປັນເຈົ້າໄດ້ບັນຊາຄົນອື່ນໆ ທີ່ນອກເໜືອໄປຈາກສາດສະດາໂຈເຊັບ ສະມິດ ເພື່ອໃຫ້ເປັນພະຍານເຖິງຄວາມສັກສິດຂອງພຣະຄຳພີມໍມອນ (ຄພ 17; 128:20). ເບິ່ງປະຈັກພະຍານຂອງພະຍານເຫລົ່ານີ້ ໃນ "ຄຳນຳ" ຢູ່ທາງໜ້າຂອງພຣະຄຳພີມໍມອນ.

ໂດຍຄຳເວົ້າຂອງຄົນສາມຄົນ ເຮົາຈະສະຖາປະນາຄຳເວົ້າຂອງເຮົາ, **2 ນຟ** 11:3. ພະຍານຈະຕ້ອງສະແດງປະຈັກພະຍານເຖິງພຣະຄຳຂອງພຣະອົງຕໍ່ລູກຫລານມະນຸດ, **2 ນຟ** 27:12–13. ດ້ວຍປາກຂອງພະຍານສາມຄົນ ສິ່ງເຫລົ່ານີ້ຈະໄດ້ສະຖາປະນາຂຶ້ນ, **ອທ** 5:4.

ດ້ວຍສັດທາພະຍານສາມຄົນຈະໄດ້ເຫັນແຜ່ນຈາລຶກ, **ຄພ** 17.

**ພະແຣັດ, ພາລີ ພາກເກີ**

ອ້າຍຂອງ ອໍສັນ ພະແຣັດ ແລະ ຜູ້ໜຶ່ງໃນອັກຄະສາວົກສິບສອງຄົນຂອງກຸ່ມທຳອິດ ທີ່ຖືກເອີ້ນຫລັງຈາກສາດສະໜາຈັກໄດ້ຖືກຟື້ນຟູຄືນມາໃໝ່ ໃນສະໄໝປະຈຸບັນ (ຄພ 124:128–129). ພາລີ ພະແຣັດ ໄດ້ຖືກເອີ້ນໃຫ້ເປັນຜູ້ສອນສາດສະໜາລຸ້ນທຳອິດ ໃນຫລາຍໆລຸ້ນ ເມື່ອພຣະຜູ້ເປັນເຈົ້າ ໄດ້ມອບການເປີດເຜີຍໃຫ້ລາວ ຜ່ານທາງໂຈເຊັບ ສະມິດ ໃນເດືອນຕຸລາ ປີ 1830 (ຄພ 32; 50:37).

**ພະແຣັດ, ອໍສັນ**

ຜູ້ໜຶ່ງໃນອັກຄະສາວົກສິບສອງຄົນຂອງກຸ່ມທຳອິດ ທີ່ຖືກເອີ້ນຫລັງຈາກສາດສະໜາຈັກໄດ້ຖືກຟື້ນຟູຄືນມາໃໝ່ ໃນສະໄໝປະຈຸບັນ (ຄພ 124:128–129). ລາວໄດ້ເປັນສະມາຊິກຂອງສາດສະໜາຈັກພຽງແຕ່ຫົກອາທິດ ເທົ່ານັ້ນ ເມື່ອພຣະຜູ້ເປັນເຈົ້າໄດ້ມອບການເປີດເຜີຍໃຫ້ລາວ ຜ່ານທາງໂຈເຊັບ ສະມິດ (ຄພ 34). ອໍສັນ ພະແຣັດກໍໄດ້ເປັນຜູ້ສອນສາດສະໜາສຳລັບສາດສະໜາຈັກນຳອີກ (ຄພ 52:26; 75:14) ແລະ ໄດ້ຮັບໃຊ້ເປັນນັກປະຫວັດສາດຂອງສາດສະໜາຈັກ ເປັນເວລາຫລາຍປີ.

**ພຣະກັນ.** *ເບິ່ງ* ຫູ, ພຣະກັນ

**ພຣະກິດຕິຄຸນ.** *ເບິ່ງ* ຄຳສອນຂອງພຣະຄຣິດ; ຍຸກສະໄໝ; ແຜນແຫ່ງການໄຖ່ *ນຳອີກ*

ແຜນແຫ່ງຄວາມລອດຂອງພຣະເຈົ້າ, ໄດ້ເຮັດໃຫ້ເປັນໄປໄດ້ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດ. ພຣະກິດຕິຄຸນຮ່ວມດ້ວຍຄວາມຈິງນິລັນດອນ ຫລື ກົດໝາຍ, ພັນທະສັນຍາ, ແລະ ພິທີການທີ່ຈຳເປັນສຳລັບມະນຸດຊາດ ເພື່ອກັບຄືນໄປຫາທີ່ປະທັບຂອງພຣະເຈົ້າ. ພຣະເຈົ້າໄດ້ຟື້ນຟູຄວາມສົມບູນຂອງພຣະກິດຕິຄຸນຄືນສູ່ແຜ່ນດິນໂລກໃນສັດຕະວັດທີສິບເກົ້າຜ່ານສາດສະດາໂຈເຊັບ ສະມິດ.

ເຈົ້າທັງຫລາຍຈົ່ງໄປທົ່ວໂລກປະກາດຂ່າວປະເສີດ, **ມຣກ** 16:15.

ຂໍ້ຄວາມທີ່ແຈ່ມແຈ້ງ ແລະ ມີຄ່າທີ່ສຸດຂອງພຣະກິດຕິຄຸນຂອງພຣະເມສານ້ອຍຖືກກັກໄວ້, **1 ນຟ** 13:32. ນີ້ຄືພຣະກິດຕິຄຸນຂອງເຮົາ, **3 ນຟ** 27:13–21 (ຄພ 39:6).

ພຣະຄຳພີມໍມອນບັນຈຸຄວາມສົມບູນຂອງພຣະກິດຕິຄຸນ, **ຄພ** 20:8–9 (ຄພ 42:12). ນີ້ຄືພຣະກິດຕິຄຸນ, **ຄພ** 76:40–43. ຖານະປະໂລຫິດແຫ່ງເມນຄີເສເດັກປະຕິບັດພຣະກິດຕິຄຸນ, **ຄພ** 84:19. ທຸກຄົນຈະໄດ້ຍິນຄວາມສົມບູນຂອງພຣະກິດຕິຄຸນໃນພາສາຂອງເຂົາເອງ,

**ຄພ** 90:11. ພຣະບຸດສັ່ງສອນພຣະກິດຕິຄຸນໃຫ້ແກ່ວິນຍານຂອງຄົນຕາຍ, **ຄພ** 138:18–21, 28–37.

ພຣະກິດຕິຄຸນໄດ້ຖືກສັ່ງສອນຕັ້ງແຕ່ຕົ້ນ, **ມຊ** 5:58. ຫລັກທຳ ແລະ ພິທີການເບື້ອງຕົ້ນຂອງພຣະກິດຕິຄຸນໄດ້ຖືກບັນຍາຍໄວ້, **ຫຼຊ** 1:4.

**ພຣະກິດຕິຄຸນ, ການຟື້ນຟູ.** *ເບິ່ງ* ການຟື້ນຟູພຣະກິດຕິຄຸນ

**ພຣະຄຣິສຕະທຳຄຳພີ.** *ເບິ່ງ* ພຣະຄຳພີ; ພຣະຄຳພີເດີມ; ພຣະຄຳພີໃໝ່; ຢູດາ (ລູກຊາຍຂອງຢາໂຄບ)—ກິ່ງງ່າຂອງຢູດາ; ວິໄນສາດສະໜາ; ອາພໍກະຣາຟາ; ເອຟະຣາອິມ—ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ *ນຳອີກ*

ການຂຽນ ທີ່ ສະ ສົມ ໄວ້ຂອງຊາວ ເຮັບເຣີ ແລະ ຊາວຄຣິດ ສະ ຕຽນ ຊຶ່ງບັນຈຸການເປີດເຜີຍຈາກສະຫວັນ. ຄຳວ່າ *ພຣະຄຣິສຕະທຳຄຳພີ* ໝາຍເຖິງ "ໜັງສື." ພຣະຄຣິສຕະທຳຄຳພີເປັນວຽກງານຂອງສາດສະດາ ແລະ ຜູ້ຂຽນຫລາຍທ່ານທີ່ໄດ້ຮັບການດົນໃຈ ຊຶ່ງກະທຳພາຍໃຕ້ອິດທິພົນຂອງພຣະວິນຍານທີ່ສັກສິດ (2 ປຕ 1:21).

ພຣະຄຣິສຕະທຳຄຳພີຂອງຊາວຄຣິດສະຕຽນມີຢູ່ສອງພາກ, ຮູ້ຈັກກັນດີວ່າພຣະຄຳພີເດີມ ແລະ ພຣະຄຳພີໃໝ່. ພຣະຄຳພີເດີມປະກອບດ້ວຍໜັງສືພຣະຄຳພີທີ່ໃຊ້ກັນໃນບັນດາຊາວຢິວຂອງພີລິດສະຕິນ ລະຫວ່າງ ການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະຜູ້ເປັນເຈົ້າ. ພຣະຄຳພີໃໝ່ບັນຈຸການຂຽນໃນຍຸກສະໄໝຂອງອັກຄະສາວົກ ແລະ ຖືວ່າມີຄວາມສັກສິດ ແລະ ສິດອຳນາດດຽວກັນກັບພຣະຄຳພີຂອງຊາວຢິວ. ໜັງສືພາກຕ່າງໆຂອງພຣະຄຳພີເດີມໄດ້ເອົາມາຈາກວັນນະຄະດີຂອງຊາດ ຊຶ່ງຄວບຄຸມຫລາຍສັດຕະວັດ ແລະ ຖືກຂຽນໄວ້ໃນພາສາເຮັບເຣີເກືອບທັງໝົດ, ໃນຂະນະທີ່ໜັງສືພາກຕ່າງໆຂອງພຣະຄຳພີໃໝ່ເປັນວຽກງານຂອງຄົນລຸ້ນດຽວກັນ ແລະ ສ່ວນໃຫຍ່ໄດ້ຖືກຂຽນໄວ້ໃນພາສາກຣີກ.

ໃນພຣະຄຳພີເດີມ ຄຳວ່າ *ພຣະຄຳພີ* ໃນພາສາເຮັບເຣີແປວ່າ "ພັນທະສັນຍາ." ພັນທະສັນຍາເດີມຄືກົດທີ່ໄດ້ປະທານໃຫ້ແກ່ໂມເຊ ເມື່ອຊາວອິດສະຣາເອນປະຕິເສດຄວາມສົມບູນແຫ່ງພຣະກິດຕິຄຸນ ຊຶ່ງຜູ້ຄົນຂອງພຣະເຈົ້າມີຢູ່ຕັ້ງແຕ່ຕົ້ນຂອງຄວາມເປັນມະຕະ. ພັນທະສັນຍາໃໝ່ຄືພຣະກິດຕິຄຸນທີ່ພຣະເຢຊູຄຣິດໄດ້ສິດສອນໄວ້.

ໃນພຣະຄຣິສຕະທຳຄຳພີຂອງຊາວເຮັບເຣີ (ພຣະ ຄຳ ພີ ເດີມ) ໜັງ ສື ຕ່າງໆ ໄດ້ ຖືກ ແຍກອອກເປັນສາມໝວດ: ກົດ, ສາດສະດາ, ແລະ ການຂຽນ. ພຣະຄຣິສຕະທຳຄຳພີທີ່ໂລກຂອງຊາວຄຣິດສະຕຽນໃຊ້ ໄດ້ແຍກໜັງສືຕ່າງໆຕາມເນື້ອເລື່ອງ, ດັ່ງເຊັ່ນ ທາງປະຫວັດສາດ, ບົດກະວີ, ແລະ ການທຳນາຍ.

ໜັງສືຕ່າງໆຂອງພາກພຣະຄຳພີໃໝ່ ຖືກຮຽບຮຽງໄວ້ດັ່ງນີ້: ພຣະກິດຕິຄຸນສີ່ເຫລັ້ມ ແລະ ກິດຈະການ; ສານຂອງໂປໂລ; ສານທົ່ວໄປຂອງຢາໂກໂບ, ເປໂຕ, ໂຢຮັນ, ແລະ ຢູດາ; ແລະ ພຣະນິມິດຂອງໂຢຮັນ.

ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍຄາລະວະ ແລະ ນັບຖືພຣະຄຣິສຕະທຳຄຳພີ ແລະ ຢືນຢັນອີກວ່າ ພຣະຜູ້ເປັນເຈົ້າຍັງດຳເນີນການເປີດເຜີຍເພີ່ມເຕີມຜ່ານທາງສາດສະດາຂອງພຣະອົງ ໃນຍຸກສຸດທ້າຍ ຊຶ່ງສະໜັບສະໜູນ ແລະ ຢືນຢັນຄວາມຖືກຕ້ອງຂອງເລື່ອງລາວໃນພຣະຄຣິສຕະທຳຄຳພີ ກ່ຽວກັບການຕິດຕໍ່ຂອງພຣະເຈົ້າກັບມະນຸດຊາດ.

ກິ່ງງ່າຂອງຢູດາ (ພຣະຄຣິສຕະທຳຄຳພີ) ແລະ ກິ່ງງ່າຂອງໂຢເຊັບ (ພຣະຄຳພີມໍມອນ) ຈະກາຍເປັນໜຶ່ງໃນພຣະຫັດຂອງພຣະຜູ້ເປັນເຈົ້າ, **ອຊກ** 37:15–20.

ຄວາມຈິງຂອງພຣະຄຣິສຕະທຳຄຳພີ ຈະຖືກສະຖາປະນາຂຶ້ນໂດຍພຣະຄຳພີຍຸກສຸດທ້າຍ, **1 ນຟ** 13:38–40. ພຣະຄຣິສຕະທຳຄຳພີ ແລະ ພຣະຄຳພີມໍມອນຈະຮ່ວມກັນເຮັດໃຫ້ຄຳສອນທີ່ຜິດຍອມຈຳນົນ, **2 ນຟ** 3:12. ພຣະຄຣິສຕະທຳຄຳພີ! ພຣະຄຣິສຕະທຳຄຳພີ! ພວກເຮົາມີພຣະຄຣິສຕະທຳຄຳພີຢູ່ແລ້ວ, **2 ນຟ** 29:3–10. ທຸກຄົນທີ່ເຊື່ອພຣະຄຣິສຕະ

ທຳຄຳພີ ຈະເຊື່ອພຣະຄຳພີມໍມອນຄືກັນ, **ມມ** 7:8–10.

ແອວເດີຈະສິດສອນຫລັກທຳພຣະກິດຕິຄຸນຂອງ ເຮົາ, ຊຶ່ງມີຢູ່ ໃນພຣະ ຄຣິສຕະທຳ ຄຳ ພີ ແລະ ພຣະຄຳພີມໍມອນ, **ຄພ** 42:12.

ພວກ ເຮົາເຊື່ອວ່າ ພຣະ ຄຣິສຕະທຳ ຄຳ ພີ ເປັນພຣະຄຳຂອງພຣະເຈົ້າຕາບໃດທີ່ແປມັນຖືກຕ້ອງ, **ຫຼຊ** 1:8.

**ພຣະຄຣິສຕະທຳຄຳພີ, ການແປຂອງໂຈເຊັບ ສະມິດ (ປຈສ).** *ເບິ່ງ* ການແປຂອງໂຈເຊັບ ສະມິດ (ປຈສ)

**ພຣະຄຣິດ.** *ເບິ່ງ* ພຣະເຢຊູຄຣິດ

**ພຣະຄຸນ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ເມດຕາ, ມີເມດຕາ, ຄວາມເມດຕາ; ລອດ, ຄວາມລອດ *ນຳອີກ*

ອຳນາດ ທີ່ເຮັດ ໃຫ້ສາມາດ ຈາກພຣະ ເຈົ້າທີ່ອະນຸຍາດໃຫ້ຊາຍ ແລະ ຍິງ ເພື່ອຮັບເອົາພອນໃນຊີວິດນີ້ ແລະ ເພື່ອໄດ້ຮັບຊີວິດນິລັນດອນ ແລະ ຄວາມສູງສົ່ງຫລັງຈາກເຂົາເຈົ້າໃຊ້ສັດທາ, ໄດ້ກັບໃຈ, ແລະ ໄດ້ພະຍາຍາມຈົນສຸດຄວາມສາມາດທີ່ຈະຮັກສາພຣະບັນຍັດ. ຄວາມຊ່ວຍເຫລືອ ຫລື ພະລັງຈາກສະຫວັນເຊັ່ນນັ້ນໄດ້ຖືກມອບໃຫ້ຜ່ານຄວາມເມດຕາ ແລະ ຄວາມຮັກຂອງພຣະເຈົ້າ. ທຸກຄົນທີ່ເປັນມະຕະຕ້ອງການພຣະຄຸນຈາກສະຫວັນ ເພາະການຕົກຂອງອາດາມ ແລະ ເພາະຄວາມອ່ອນແອຂອງມະນຸດນຳອີກ.

ພຣະຄຸນ ແລະ ຄວາມຈິງໄດ້ມີມາໂດຍທາງພຣະເຢຊູຄຣິດ, **ຢຮ** 1:17. ພວກເຮົາພົ້ນດ້ວຍພຣະຄຸນຂອງພຣະຄຣິດ, **ກຈກ** 15:11 (ຣມ 3:23–24; ຄພ 138:14). ໂດຍທາງພຣະອົງເຮົາຈຶ່ງເຂົ້າໄປໃນຮົ່ມພຣະຄຸນ, **ຣມ** 5:2. ທ່ານທັງຫລາຍພົ້ນກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ, **ອຟຊ** 2:8. ພຣະຄຸນຂອງພຣະເຈົ້ານຳຄວາມລອດພົ້ນມາໃຫ້, **ຕຕ** 2:11. ຈົ່ງເຂົ້າໄປດ້ວຍໃຈກ້າຫານເຖິງທີ່ນັ່ງແຫ່ງພຣະຄຸນ, **ຮຣ** 4:16. ພຣະເຈົ້າປະທານພຣະຄຸນແກ່ຜູ້ທີ່ຖ່ອມຕົວ, **1 ປຕ** 5:5.

ບໍ່ມີໃຜຈະຢູ່ໃນທີ່ປະທັບຂອງພຣະເຈົ້າໄດ້ນອກຈາກເປັນພຣະຄຸນຄວາມດີ, ແລະ ພຣະເມດຕາ, ແລະ ພຣະຄຸນຂອງພຣະເມຊີອາຜູ້ບໍລິສຸດ, **2 ນຟ** 2:8. ຈະເປັນໂດຍພຣະຄຸນຂອງພຣະເຈົ້າເທົ່ານັ້ນທີ່ທ່ານຈະລອດ, **2 ນຟ** 10:24. ຫລັງຈາກພວກເຮົາເຮັດທຸກຢ່າງໄດ້ແລ້ວ ໂດຍພຣະຄຸນພວກເຮົາຈຶ່ງລອດ, **2 ນຟ** 25:23. ເປັນຍ້ອນພຣະຄຸນຂອງພຣະອົງ ພວກເຮົາຈຶ່ງມີອຳນາດ ເຮັດສິ່ງເຫລົ່ານີ້ໄດ້, **ຢຄ** 4:7. ມະນຸດໄດ້ຖືກນຳກັບຄືນສູ່ພຣະຄຸນເພື່ອພຣະຄຸນ, ຕາມວຽກງານຂອງພວກເຂົາ, **ຮລມ** 12:24. ຄຸນງາມຄວາມດີຂອງເຮົາມີພຽງພໍສຳລັບຄົນທີ່ອ່ອນໂຍນ ແລະ ທຸກຄົນທີ່ຖ່ອມຕົວ, **ອທ** 12:26–27. ໂມໂຣໄນໄດ້ອະທິຖານຂໍໃຫ້ຄົນຕ່າງຊາດໄດ້ຮັບຄຸນງາມຄວາມດີ ເພື່ອວ່າພວກເຂົາຈະໄດ້ມີຄວາມໃຈບຸນ, **ອທ** 12:36, 41. ໂດຍພຣະຄຸນຂອງພຣະເຈົ້າທ່ານຈຶ່ງດີພ້ອມໃນພຣະຄຣິດ, **ມຣນ** 10:32–33.

ພຣະເຢຊູໄດ້ຮັບຈາກພຣະຄຸນໜຶ່ງຫາອີກພຣະຄຸນໜຶ່ງ, **ຄພ** 93:12–13, 20.

**ພຣະຄຳ.** *ເບິ່ງ* ພຣະເຢຊູຄຣິດ—ການເປັນຢູ່ຂອງພຣະຄຣິດກ່ອນມະຕະ

**ພຣະຄຳຂອງພຣະເຈົ້າ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ; ພຣະຄຳພີ; ພຣະບັນຍັດຂອງພຣະເຈົ້າ *ນຳອີກ*

ຄຳແນະນຳ, ພຣະບັນຍັດ, ຫລື ຂ່າວສານຈາກພຣະເຈົ້າ. ລູກໆຂອງພຣະເຈົ້າ ອາດໄດ້ຮັບພຣະຄຳຂອງພຣະອົງໂດຍກົງ ໂດຍການເປີດເຜີຍ ຜ່ານພຣະວິນຍານ ຫລື ຈາກຜູ້ຮັບໃຊ້ທີ່ຖືກເລືອກໄວ້ຂອງພຣະອົງ (ຄພ 1:38).

ມະນຸດ ຈະ ບໍ່ ໄດ້ ລ້ຽງ ຊີວິດດ້ວຍອາຫານແຕ່ຢ່າງດຽວ ແຕ່ດ້ວຍທຸກຄຳທີ່ອອກມາຈາກພຣະໂອດຂອງພຣະຜູ້ເປັນເຈົ້າ, **ພບຍ** 8:3 (ມທ 4:4; ຄພ 84:43–44). ພຣະຄຳຂອງພຣະອົງເປັນແສງໂຄມນຳທາງໃຫ້ຂ້ານ້ອຍ, **ພສສ** 119:105.

ພວກ ເຂົາ ເຕັມໄປດ້ວຍພຣະວິນຍານບໍລິສຸດ ແລະ ໄດ້ເວົ້າພຣະຄຳຂອງພຣະເຈົ້າ ດ້ວຍຄວາມກ້າຫານ, **ກຈກ** 4:31–33.

ຮາວ ເຫລັກ ຄື ພຣະ ຄຳ ຂອງ ພຣະ ເຈົ້າ ທີ່ ນຳພາໄປຫາຕົ້ນໄມ້ແຫ່ງຊີວິດ, **1 ນຟ** 11:25 (1 ນຟ 15:23–25). ພວກເຈົ້າມີໃຈແຂງເກີນ ກວ່າທີ່ຈະຮູ້ສຶກ, ພວກເຈົ້າຈຶ່ງຈະຮູ້ສຶກໃນຄຳ ຂອງພຣະອົງບໍ່ໄດ້, **1 ນຟ** 17:45–46. ວິບັດ ແກ່ຄົນທີ່ປະຕິເສດພຣະຄຳຂອງພຣະເຈົ້າ, **2 ນຟ** 27:14 (2 ນຟ 28:29; ອທ 4:8). ມຸ້ງໜ້າ, ຊື່ນຊົມດ້ວຍພຣະຄຳຂອງພຣະຄຣິດ, **2 ນຟ** 31:20 (2 ນຟ 32:3). ເປັນຍ້ອນຄວາມບໍ່ເຊື່ອ ຖືຂອງພວກເຂົາ, ພວກເຂົາຈຶ່ງບໍ່ເຂົ້າໃຈພຣະ ຄຳຂອງພຣະເຈົ້າ, **ມຊຢ** 26:3 (ແອວ 12:10). ເຂົາເຈົ້າໄດ້ຄົ້ນຄວ້າພຣະຄຳພີຢ່າງພາກພຽນ, ເພື່ອເຂົາເຈົ້າຈະໄດ້ຮູ້ຈັກພຣະຄຳຂອງພຣະ ເຈົ້າ, **ແອວ** 17:2. ທົດລອງຄຸນນະທຳແຫ່ງພຣະ ຄຳຂອງພຣະເຈົ້າ, **ແອວ** 31:5. ແອວມາປຽບ ທຽບພຣະຄຳຂອງພຣະເຈົ້າໃສ່ກັບເມັດພືດ, **ແອວ** 32:28–43.

ສິ່ງໃດກໍຕາມທີ່ພວກເຂົາຈະກ່າວເມື່ອໄດ້ ຮັບການດົນໃຈໂດຍພຣະວິນຍານບໍລິສຸດ ຈະເປັນພຣະຄຳຂອງພຣະຜູ້ເປັນເຈົ້າ, **ຄພ** 68:4. ດຳລົງຊີວິດຕາມທຸກຄຳທີ່ອອກມາຈາກ ພຣະໂອດຂອງພຣະເຈົ້າ, **ຄພ** 84:44–45.

ຜູ້ໃດກໍຕາມທີ່ສະສົມຖ້ອຍຄຳຂອງເຮົາ ຈະບໍ່ ຖືກຫລອກລວງ, **ຈສ—ມ** 1:37.

**ພຣະຄຳພີ.** *ເບິ່ງ* ໄຂ່ມຸກອັນລ້ຳຄ່າ; ຄຳສອນ ແລະ ພັນທະສັນຍາ; ພຣະຄຣິສຕະທຳ ຄຳພີ; ພຣະຄຳຂອງພຣະເຈົ້າ; ພຣະຄຳພີ ມໍມອນ; ວິໄນສາດສະໜາ *ບຳອີກ*

ຖ້ອຍຄຳ, ທັງເປັນການຂຽນ ແລະ ການ ເວົ້າ, ໂດຍຜູ້ຊາຍທີ່ສັກສິດຂອງພຣະເຈົ້າ ເມື່ອ ໄດ້ຮັບການກະຕຸ້ນຈາກພຣະວິນຍານບໍລິສຸດ. ພຣະຄຳພີທີ່ເປັນທາງການຂອງສາດສະໜາ ຈັກໃນປະຈຸບັນແມ່ນຮ່ວມດ້ວຍ ພຣະຄຣິສຕະ ທຳຄຳພີ, ພຣະຄຳພີມໍມອນ, ຄຳສອນ ແລະ ພັນທະສັນຍາ, ແລະ ໄຂ່ມຸກອັນລ້ຳຄ່າ. ພຣະ ເຢຊູ ແລະ ຜູ້ຂຽນຂອງພຣະຄຳພີໃໝ່ ນັບຖືວ່າ ພຣະຄຳພີເດີມ ເປັນພຣະຄຳພີເຫລັ້ມໜຶ່ງ (ມທ 22:29; ຢຮ 5:39; 2 ຕມທ 3:15; 2 ປຕ 1:20–21). ເບິ່ງ ລຳດັບປະຫວັດສາດ ໃນພາກທ້ອຍ ທ້າຍນຳອີກ.

ເມື່ອພຣະອົງໄດ້ອະທິບາຍພຣະຄຳພີໃຫ້ ພວກເຮົາຟັງນັ້ນ ໃຈຂອງພວກເຮົາກໍຮ້ອນ ຮົນເໝືອນໄຟພາຍໃນ ພວກເຮົາບໍ່ແມ່ນບໍ, **ລກ** 24:32. ເຈົ້າທັງຫລາຍຄົ້ນຫາໃນພຣະຄຳ ພີ ເພາະຄິດວ່າຈະພົບຊີວິດນິລັນດອນ: ແມ່ນ ພຣະຄຳພີນີ້ແຫລະທີ່ເປັນພະຍານໃຫ້ເຮົາ, **ຢຮ** 5:39.

ພຣະຄຳຂອງພຣະຄຣິດ ຈະບອກພວກທ່ານ ທຸກຢ່າງທີ່ພວກທ່ານຄວນເຮັດ, **2 ນຟ** 32:3. ເມື່ອຫລາຍຕໍ່ຫລາຍຄົນໄດ້ຖືກຊັກຊວນໃຫ້ ມາເຊື່ອພຣະຄຳພີອັນສັກສິດ ກໍໝັ້ນຄົງ ແລະ ແນ່ວແນ່ ໃນສັດທາ, **ຮລມ** 15:7–8.

ມະນຸດເຮັດຜິດພາດ ໃນການບິດເບືອນຂໍ້ ພຣະຄຳພີ ແລະ ບໍ່ເຂົ້າໃຈມັນ, **ຄພ** 10:63. ຖ້ອຍຄຳເຫລົ່ານີ້ບໍ່ໄດ້ເປັນຂອງມະນຸດ ຫລື ຂອງຄົນໃດ, ແຕ່ເປັນຂອງເຮົາ, **ຄພ** 18:34–36. ການອອກມາຂອງພຣະຄຳພີມໍມອນ ພິສູດ ຕໍ່ຊາວໂລກວ່າ ພຣະຄຳພີເປັນຄວາມຈິງ, **ຄພ** 20:2, 8–12. ຈົ່ງອຸທິດເວລາແກ່ການສຶກສາ ພຣະຄຳພີ, **ຄພ** 26:1. ພຣະຄຳພີໄດ້ຖືກມອບ ໃຫ້ ເພື່ອເປັນການແນະນຳໄພ່ພົນຂອງພຣະ ເຈົ້າ, **ຄພ** 33:16. ພຣະຄຳພີໄດ້ຖືກມອບໃຫ້ ເພື່ອຄວາມລອດຂອງຜູ້ທີ່ຖືກເລືອກໄວ້, **ຄພ** 35:20. ຈົ່ງສອນຫລັກທຳພຣະກິດຕິຄຸນຂອງ ເຮົາ, ຊຶ່ງມີຢູ່ໃນພຣະຄຣິສຕະທຳຄຳພີ ແລະ ພຣະຄຳພີມໍມອນ, **ຄພ** 42:12. ກົດຂອງເຮົາ ກ່ຽວກັບສິ່ງເຫລົ່ານີ້ ຊຶ່ງໃຫ້ໄວ້ຢູ່ໃນພຣະຄຳພີ ຂອງເຮົາ, **ຄພ** 42:28. ສິ່ງໃດກໍຕາມທີ່ຖືກກ່າວ ເມື່ອໄດ້ຮັບການດົນໃຈໂດຍພຣະວິນຍານບໍລິ ສຸດ ຈະເປັນພຣະຄຳພີ, **ຄພ** 68:4.

*ພຣະຄຳພີທີ່ສູນເສຍໄປ:* ມີການຂຽນທີ່ສັກ ສິດຫລາຍເຫລັ້ມທີ່ພຣະຄຳພີໄດ້ກ່າວເຖິງ ແຕ່ ເຮົາບໍ່ມີຢູ່ໃນທຸກວັນນີ້, ຊຶ່ງໃນບັນດາການ ຂຽນດັ່ງກ່າວແມ່ນໜັງສື ແລະ ຜູ້ຂຽນເຫລົ່າ ນີ້: ພັນທະສັນຍາ (ອພຍ 24:7), ສົງຄາມຂອງ ພຣະຜູ້ເປັນເຈົ້າ (ຈບຊ 21:14), ຢາຊາ (ຢຊ 10:13; 2 ຊມອ 1:18), ການປະຕິບັດຂອງໂຊ ໂລໂມນ (1 ກສ 11:41), ຊາມູເອນຜູ້ພະຍາ ກອນ (1 ຂຄ 29:29), ສາດສະດານາທານ (2 ຂຄ 9:29), ສາດສະດາເຊມາອີຢາ (2 ຂຄ

12:15), ສາດ ສະ ດາ ອິດໂດ (2 ຂຄ 13:22), ເຢຮູ (2 ຂຄ 20:34), ຖ້ອຍຄຳຂອງຜູ້ພະຍາກອນ (2 ຂຄ 33:19), ເອນົກ (ຢດ 1:14), ແລະ ຖ້ອຍຄຳຂອງຊີໂນກ, ນີອຳ, ແລະ ຊີນັດ (1 ນຟ 19:10), ຊີນັດ (ຢຄ 5:1), ຊີໂນກ ແລະ ອີໄຊອັດ (ຮລມ 8:20), ແລະ ໜັງສືແຫ່ງຄວາມຊົງຈຳ (ມຊ 6:5); ແລະ ສານເຖິງຊາວໂກຣິນໂທ (1 ກຣທ 5:9), ເຖິງຊາວເອເຟໂຊ (ອຟຊ 3:3), ແລະ ຈາກ ລາວດິເກອາ (ກລຊ 4:16), ແລະ ຈາກ ຢູດາ (ຢດ 1:3).

*ພຣະຄຳພີທີ່ຕ້ອງຮັກສາໄວ້:* ພວກເຮົາຄວນຈະໄດ້ບັນທຶກເຫລົ່ານີ້ ເພື່ອວ່າພວກເຮົາຈະໄດ້ຮັກສາພາສາທີ່ເວົ້າໂດຍສາດສະດາໄວ້, **1 ນຟ** 3:19–20. ຂ້າພະເຈົ້າຄວນຮັກສາແຜ່ນຈາລຶກເຫລົ່ານີ້ໄວ້, **ຢຄ** 1:3. ສິ່ງເຫລົ່ານີ້ໄດ້ຖືກຮັກສາໄວ້ໂດຍພຣະຫັດຂອງພຣະເຈົ້າ, **ມຊຢ** 1:5. ຈົ່ງຮັກສາສິ່ງສັກສິດເຫລົ່ານີ້ໄວ້, **ແອວ** 37:47.

ພຣະຄຳພີຈະຖືກຮັກສາໄວ້ໃນຄວາມປອດໄພ, **ຄພ** 42:56.

ຈົ່ງໃຊ້ຄວາມພະຍາຍາມທັງໝົດທີ່ຈະຮັກສາມັນໄວ້, **ຈສ—ປ** 1:59.

*ຄຸນຄ່າຂອງພຣະຄຳພີ:* ເຈົ້າຈົ່ງອ່ານກົດບັນຍັດນີ້ຕໍ່ໜ້າປະຊາຊົນອິດສະຣາເອນທຸກໆຄົນ, **ພບຍ** 31:10–13. ຢ່າໃຫ້ໜັງສືກົດບັນຍັດນີ້ຫ່າງໄກຈາກປາກຂອງເຈົ້າ, **ຢຊ** 1:8. ກົດບັນຍັດຂອງພຣະຜູ້ເປັນເຈົ້າສົມບູນ, ເປັນທີ່ຟື້ນຟູຈິດໃຈ, **ພສສ** 19:7. ຖ້ອຍຄຳຂອງພຣະອົງເປັນແສງໂຄມນຳທາງໃຫ້ຂ້ານ້ອຍ, **ພສສ** 119:105.

ແມ່ນພຣະຄຳພີນີ້ແຫລະທີ່ເປັນພະຍານໃຫ້ເຮົາ, **ຢຮ** 5:39. ພຣະຄຳພີທຸກຕອນໄດ້ຮັບການດົນໃຈຈາກພຣະເຈົ້າ ແລະ ເປັນປະໂຫຍດ ໃນການສອນ ແລະ ການກ່າວຕັກເຕືອນ, **2 ຕມທ** 3:15–16.

ຂ້າພະເຈົ້າໄດ້ປຽບທຽບພຣະຄຳພີທັງໝົດກັບຕົວພວກເຮົາ, ເພື່ອມັນຈະໄດ້ເປັນຜົນປະໂຫຍດ ແລະ ເປັນການຮຽນຮູ້ຂອງພວກເຮົາ, **1 ນຟ** 19:23. ຈິດວິນຍານຂອງຂ້າພະເຈົ້າເບີກບານໃນພຣະຄຳພີ, **2 ນຟ** 4:15–16. ພວກເຮົາເຮັດການຢ່າງພາກພຽນທີ່ຈະບັນທຶກ, ເພື່ອຊັກຊວນລູກຫລານຂອງພວກເຮົາ, ແລະ ພີ່ນ້ອງຂອງພວກເຮົາອີກ, ໃຫ້ເຊື່ອໃນພຣະຄຣິດ, **2 ນຟ** 25:23. ພວກເຂົາໄດ້ຄົ້ນຄວ້າພຣະຄຳພີ, ແລະ ບໍ່ເຊື່ອຟັງຄຳເວົ້າຂອງຄົນຊົ່ວຜູ້ນີ້ອີກຕໍ່ໄປ, **ຢຄ** 7:23 (ແອວ 14:1). ຖ້າຫາກບໍ່ມີແຜ່ນຈາລຶກເຫລົ່ານີ້, ພວກເຮົາຕ້ອງໄດ້ຮັບຄວາມທຸກທໍລະມານຢູ່ໃນຄວາມໂງ່ຈ້າຫລ້າຫລັງ, **ມຊຢ** 1:2–7. ເຂົາເຈົ້າໄດ້ຄົ້ນຄວ້າພຣະຄຳພີຢ່າງພາກພຽນ, ເພື່ອເຂົາເຈົ້າຈະໄດ້ຮູ້ຈັກພຣະຄຳຂອງພຣະເຈົ້າ, **ແອວ** 17:2–3. ພຣະຄຳພີອື່ນໆໄດ້ຖືກປົກປັກຮັກສາໄວ້ ເພື່ອນຳເອົາຈິດວິນຍານທັງຫລາຍມາຫາຄວາມລອດ, **ແອວ** 37:1–19 (2 ນຟ 3:15). ພຣະຄຳຂອງພຣະເຈົ້າຈະນຳເອົາຄົນຂອງພຣະຄຣິດໄປ, **ຮລມ** 3:29.

ສິ່ງໃດກໍຕາມທີ່ພວກເຂົາກ່າວເມື່ອໄດ້ຮັບການດົນໃຈໂດຍພຣະວິນຍານບໍລິສຸດ ຈະເປັນພຣະຄຳພີ ແລະ ເປັນອຳນາດຂອງພຣະເຈົ້າໄປສູ່ຄວາມລອດ, **ຄພ** 68:4. ໃຫ້ພິມຄວາມສົມບູນຂອງພຣະຄຳພີຂອງເຮົາ ເພື່ອຈຸດປະສົງຂອງການສ້າງສາສາດສະໜາຈັກຂອງເຮົາ ແລະ ເພື່ອຕຽມຜູ້ຄົນຂອງເຮົາ, **ຄພ** 104:58–59.

ຜູ້ໃດກໍຕາມທີ່ສະສົມຖ້ອຍຄຳຂອງເຮົາ ຈະບໍ່ຖືກຫລອກລວງ, **ຈສ—ມ** 1:37.

*ພຣະຄຳພີທີ່ໄດ້ທຳນາຍໄວ້ຈະອອກມາ:* ເອຊາຢາໄດ້ບອກລ່ວງໜ້າກ່ຽວກັບການອອກມາຂອງພຣະຄຳພີມໍມອນ, **ອຊຢ** 29:11–14. ຈົ່ງເອົາໄມ້ທ່ອນໜຶ່ງມາ ແລະ ຂຽນໃສ່ນັ້ນວ່າ ອານາຈັກຢູດາ, **ອຊກ** 37:15–20.

ໜັງສືເຫລົ້ມອື່ນຈະອອກມາ, **1 ນຟ** 13:39. ເຈົ້າກໍບໍ່ຈຳເປັນຕ້ອງຄິດວ່າພຣະຄຣິສຕະທຳຄຳພີບັນຈຸຄຳເວົ້າທັງໝົດຂອງເຮົາ, **2 ນຟ** 29:10–14. ຈົ່ງຍຶດໝັ້ນໃນພຣະກິດຕິຄຸນຂອງພຣະຄຣິດ, ຊຶ່ງຈະຖືກວາງຢູ່ຕໍ່ໜ້າທ່ານ ໃນບັນທຶກທີ່ຈະອອກມາ, **ມມ** 7:8–9. ຄົນທີ່ຈະນຳສິ່ງນີ້ມາຫາຄວາມສະຫວ່າງຍ່ອມເປັນສຸກ, **ມມ** 8:16. ຈົ່ງຂຽນເລື່ອງເຫລົ່ານີ້ ແລະ ເຮົາຈະສະແດງມັນ ໃນເວລາອັນເໝາະສົມຂອງເຮົາເອງ, **ອທ** 3:27 (ອທ 4:7).

ພວກເຮົາເຊື່ອວ່າ ພຣະອົງຈະເປີດເຜີຍອີກຫລາຍເລື່ອງ, **ຫຼຊ** 1:9.

**ພຣະຄຳພີເດີມ.** *ເບິ່ງ* ພຣະຄຣິສຕະທຳຄຳພີ; ພຣະຄຳພີ; ເພັນຕາຕຸກ *ນຳອີກ*

ການຂຽນຂອງສາດສະດາສະໄໝບູຮານ ຜູ້ໄດ້ກະທຳພາຍໃຕ້ອິດທິພົນຂອງພຣະວິນຍານສັກສິດ ແລະ ໄດ້ເປັນພະຍານເຖິງພຣະຄຣິດ ແລະ ການປະຕິບັດສາດສະໜາກິດຂອງພຣະອົງເປັນເວລາຫລາຍສັດຕະວັດ. ມັນຍັງບັນຈຸປະຫວັດສາດຂອງອັບຣາຮາມ ແລະ ຜູ້ສືບຕະກຸນຂອງເພິ່ນນຳອີກ, ເລີ່ມຈາກອັບຣາຮາມ, ແລະ ພັນທະສັນຍາ, ຫລື ພຣະຄຳພີ, ພຣະຜູ້ເປັນເຈົ້າໄດ້ເຮັດໄວ້ນຳອັບຣາຮາມ ແລະ ລູກຫລານຂອງເພິ່ນ.

ໜັງສືຫ້າເຫລັ້ມທຳອິດຂອງພຣະຄຳພີເດີມທີ່ຂຽນໂດຍໂມເຊ. ນັ້ນຄືປະຖົມມະການ, ອົບພະຍົບ, ລະບຽບພວກເລວີ, ຈົດເຊັນບັນຊີ, ແລະ ພຣະບັນຍັດສອງ. ປະຖົມມະການອ້າງເຖິງທີ່ມາຂອງແຜ່ນດິນໂລກ, ມະນຸດຊາດ, ພາສາ, ເຊື້ອຊາດ, ແລະ ການເລີ່ມຕົ້ນຂອງເຊື້ອສາຍອິດສະຣາເອນ.

ໜັງສືປະຫວັດສາດບອກເຖິງເຫດການຕ່າງໆຂອງອິດສະຣາເອນ. ໜັງສືເຫລົ່ານີ້ຄືໂຢຊວຍ, ພວກຜູ້ປົກຄອງ, ຣຸດ, 1 ແລະ 2 ຊາມູເອນ, 1 ແລະ 2 ກະສັດ, 1 ແລະ 2 ຂ່າວຄາວ, ເອຊະຣາ, ເນເຫມີຢາ, ແລະ ເອສະເທີ.

ປຶ້ມກາບກອນ ບັນທຶກປັນຍາ ແລະ ວັນນະຄະດີຂອງສາດສະດາ. ປຶ້ມເຫລົ່ານັ້ນຄື ໂຢບ, ເພງສັນລະເສີນ, ສຸພາສິດ, ປັນຍາຈານ, ຍອດເພງ, ແລະ ເພງຄ່ຳຄວນ.

ສາດສະດາໄດ້ເຕືອນຊາວອິດສະຣາເອນເຖິງຄວາມຜິດບາບຂອງຕົນ ແລະ ໄດ້ເປັນພະຍານເຖິງພອນທີ່ມາຈາກການເຊື່ອຟັງ. ພວກເພິ່ນໄດ້ທຳນາຍເຖິງການສະເດັດມາຂອງພຣະຄຣິດ, ຜູ້ຈະຊົດໃຊ້ສຳລັບຄວາມຜິດບາບຂອງຜູ້ທີ່ກັບໃຈ, ຮັບພິທີການຕ່າງໆ, ແລະ ດຳລົງຊີວິດຕາມພຣະກິດຕິຄຸນ. ໜັງສືຂອງສາດສະດາແມ່ນ ເອຊາຢາ, ເຢເຣມີຢາ, ເອເຊກຽນ, ດານີເອນ, ໂຮເຊອາ, ໂຢເອນ, ອາໂມ, ໂອບາດີຢາ, ໂຢນາ, ມີກາ, ນາຮູມ, ຮາບາກຸກ, ເສຟານີຢາ, ຮັກກາຍ, ເຊກາຣີຢາ, ແລະ ມາລາກີ.

ໜັງສືພຣະຄຳພີເດີມສ່ວນຫລາຍໄດ້ຖືກຂຽນເປັນພາສາເຮັບເຣີ. ການຂຽນສ່ວນໜ້ອຍໜຶ່ງເປັນພາສາອາຣັບ ທີ່ເປັນພາສາຄ້າຍຄືກັນ.

**ພຣະຄຳພີທີ່ສູນເສຍໄປ.** *ເບິ່ງ* ພຣະຄຳພີ—ພຣະຄຳພີທີ່ສູນເສຍໄປ

**ພຣະຄຳພີມໍມອນ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ; ແຜ່ນຈາລຶກ; ແຜ່ນຈາລຶກຄຳ; ພະຍານຂອງພຣະຄຳພີມໍມອນ; ພຣະຄຳພີ; ມໍມອນ, ສາດສະດາຊາວນີໄຟ; ວິໄນສາດສະໜາ; ເອຟະຣາອິມ—ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ *ນຳອີກ*

ໜຶ່ງໃນພຣະຄຳພີສີ່ເຫລັ້ມ ຊຶ່ງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍຮັບຮູ້. ມັນເປັນການຫຍໍ້ບັນທຶກໂດຍສາດສະດາມໍມອນກ່ຽວກັບບັນທຶກຂອງຜູ້ຄົນໃນສະໄໝບູຮານທີ່ອາໄສຢູ່ອາເມຣິກາ. ມັນໄດ້ຖືກຂຽນໄວ້ເພື່ອເປັນພະຍານວ່າພຣະເຢຊູຄືພຣະຄຣິດ. ກ່ຽວກັບບັນທຶກນີ້, ສາດສະດາໂຈເຊັບ ສະມິດ, ຜູ້ໄດ້ແປມັນໂດຍຂອງປະທານ ແລະ ອຳນາດຂອງພຣະເຈົ້າ, ໄດ້ກ່າວວ່າ: "ຂ້າພະເຈົ້າໄດ້ບອກບັນດາອ້າຍນ້ອງວ່າ ພຣະຄຳພີມໍມອນເປັນໜັງສືທີ່ຖືກຕ້ອງຫລາຍກວ່າໜັງສືໃດໆຢູ່ເທິງແຜ່ນດິນໂລກ, ແລະ ເປັນຫີນເສົາເອກຂອງສາດສະໜາຂອງເຮົາ, ແລະ ມະນຸດຈະເຂົ້າໃກ້ພຣະເຈົ້າຫລາຍຂຶ້ນໂດຍການຍຶດໝັ້ນກັບກົດເກນຂອງໜັງສືເຫລັ້ມນີ້" (ເບິ່ງ ຄຳນຳຢູ່ທາງໜ້າຂອງພຣະຄຳພີມໍມອນ).

ພຣະຄຳພີມໍມອນເປັນບັນທຶກທາງສາດສະໜາຂອງຜູ້ຄົນສາມກຸ່ມ ຊຶ່ງໄດ້ຍົກຍ້າຍຈາກໂລກເກົ່າໄປຫາທະວີບອາເມຣິກາ. ກຸ່ມຜູ້ຄົນເຫລົ່ານີ້ໄດ້ຖືກນຳພາໂດຍສາດສະດາ ຜູ້ໄດ້ບັນທຶກປະຫວັດສາດທາງສາດສະໜາ ແລະ ທາງໂລກຂອງພວກເຂົາໄວ້ໃນແຜ່ນຈາລຶກ. ພຣະຄຳພີມໍມອນບັນທຶກການສະເດັດມາຢ້ຽມຢາມຂອງພຣະເຢຊູຄຣິດຕໍ່ຜູ້ຄົນໃນອາເມຣິກາຫລັງຈາກການຟື້ນຄືນພຣະຊົນຂອງພຣະອົງ.

ມີສັນຕິສຸກເປັນເວລາສອງຮ້ອຍປີຫລັງຈາກການສະເດັດມາຢ້ຽມຢາມຂອງພຣະຄຣິດ.

ໂມໂຣໄນ, ສາດສະດາ ແລະ ນັກປະຫວັດສາດຄົນສຸດທ້າຍຂອງຊາວນີໄຟ, ໄດ້ຜະນຶກບັນທຶກສະບັບຫຍໍ້ຂອງຜູ້ຄົນເຫລົ່ານີ້ ແລະ ໄດ້ເຊື່ອງມັນໄວ້ ເມື່ອປະມານ ຄ.ສ. 421. ໃນປີ 1823, ໂມໂຣໄນທີ່ໄດ້ຟື້ນຄືນຊີວິດແລ້ວໄດ້ມາຢ້ຽມຢາມໂຈເຊັບ ສະມິດ ແລະ ຕໍ່ມາໄດ້ມອບບັນທຶກບູຮານ ແລະ ສັກສິດເຫລົ່ານີ້ໃຫ້ເພິ່ນເພື່ອແປ ແລະ ນຳອອກມາສູ່ໂລກໃນຖານະເປັນປະຈັກພະຍານອີກຢ່າງໜຶ່ງເຖິງພຣະເຢຊູຄຣິດ.

ໂຢເຊັບເປັນດັ່ງລຳປ່າ ຜູ້ຊຶ່ງປຽບຄືລູກມ້າເຖິງ ໂຕງາມ ຕາມເນີນ ພູ ພຸ້ນ, **ປຖກ** 49:22–26. ຄວາມຈິງຈະພົ້ງຈາກ ແຜ່ນດິນຂຶ້ນໄປ, **ພສສ** 85:11 (ມມ 8:16; ມຊ 7:62). ພຣະຜູ້ເປັນເຈົ້າຈະເຮັດສັນຍານເອີ້ນເອົາຊາດໜຶ່ງ ແລະ ຈະຜິວເອົາພວກເຂົາມາ, **ອຊຢ** 5:26. ສຽງຈະກ່າວຂຶ້ນມາຈາກພື້ນດິນ, **ອຊຢ** 29:4 (2 ນຟ 26:14–17). ພາບນິມິດຂອງເຫດການທັງໝົດເຫລົ່ານີ້ໄດ້ກາຍເປັນດັ່ງໜັງສືມ້ວນທີ່ຖືກປະທັບຕາໄວ້, **ອຊຢ** 29:11 (ອຊຢ 29:9–18; 2 ນຟ 27:6–26). ກິ່ງງ່າຂອງໂຢເຊັບ ແລະ ຂອງຢູດາ ຈະເປັນໜຶ່ງໃນພຣະຫັດຂອງພຣະຜູ້ເປັນເຈົ້າ, **ອຊກ** 37:15–20.

ມີຝູງແກະອື່ນທີ່ເປັນຝູງແກະຂອງເຮົາ, ແຕ່ບໍ່ຢູ່ໃນຝູງນີ້, **ຢຮ** 10:16 (3 ນຟ 15:16–24).

ພຣະຄຳພີມໍມອນ ແລະ ພຣະຄຣິສຕະທຳຄຳພີ ຈະເຕີບໂຕໄປດ້ວຍກັນ, **2 ນຟ** 3:12–21. ພຣະຄຳຂອງພຣະຜູ້ເປັນເຈົ້າຈະຮຽກຮ້ອງອອກໄປຫາທີ່ສຸດຂອງແຜ່ນດິນໂລກ, **2 ນຟ** 29:2. ພຣະຜູ້ເປັນເຈົ້າໄດ້ໃຫ້ພັນທະສັນຍາກັບເອໂນດວ່າຈະນຳພຣະຄຳພີມໍມອນອອກມາໃຫ້ຊາວເລມັນ, **ອນ** 1:15–16. ພຣະຄຳພີມໍມອນໄດ້ຖືກຂຽນໄວ້ດ້ວຍມີເຈດຕະນາວ່າເຮົາຈະເຊື່ອພຣະຄຣິສຕະທຳຄຳພີ, **ມມ** 7:9. ພຣະຄຳພີມໍມອນຈະຢູ່ເປັນປະຈັກພະຍານກ່າວໂທດໂລກ, **ອທ** 5:4. ໃຫ້ທູນຖາມພຣະເຈົ້າຖ້າຫາກເລື່ອງເຫລົ່ານີ້ບໍ່ຈິງ, **ມຣນ** 10:4.

ພຣະຄຣິດໄດ້ສະແດງປະຈັກພະຍານວ່າພຣະຄຳພີມໍມອນເປັນຄວາມຈິງ, **ຄພ** 17:6. ພຣະຄຳພີມໍມອນບັນຈຸຄວາມສົມບູນຂອງພຣະກິດຕິຄຸນຂອງພຣະເຢຊູຄຣິດ, **ຄພ** 20:9 (ຄພ 20:8–12; 42:12).

ພວກເຮົາເຊື່ອວ່າພຣະຄຳພີມໍມອນເປັນພຣະຄຳຂອງພຣະເຈົ້າ, **ຫຼຊ** 1:8.

**ພຣະຄຳພີໃໝ່.** *ເບິ່ງ* ພຣະຄຣິສຕະທຳຄຳພີ; ພຣະຄຳພີ *ນຳອີກ*

ການຂຽນທີ່ດົນໃຈຊຸດໜຶ່ງ (ສະບັບຕົ້ນເປັນພາສາກຣີກ) ກ່ຽວກັບຊີວິດ ແລະ ການປະຕິບັດສາດສະໜາກິດຂອງພຣະເຢຊູຄຣິດ, ອັກຄະສາວົກ, ແລະ ຜູ້ຕິດຕາມຄົນອື່ນໆຂອງພຣະເຢຊູຄຣິດ. ພຣະຄຳພີໃໝ່ໄດ້ຖືກແຍກອອກເປັນຫລາຍພຣະທຳ, ກິດຈະການຂອງອັກຄະສາວົກ, ສານຂອງໂປໂລ, ສານທົ່ວໄປ, ແລະ ພຣະທຳພຣະນິມິດ.

ພຣະທຳສີ່ເຫລັ້ມ—ໜັງສືມັດທາຍ, ມາຣະໂກ, ລູກາ, ແລະ ໂຢຮັນ—ເປັນເລື່ອງລາວກ່ຽວກັບພຣະຊົນຊີບຂອງພຣະຄຣິດ. ພຣະທຳກິດຈະການບັນທຶກປະຫວັດສາດຂອງສາດສະໜາຈັກ ແລະ ອັກຄະສາວົກ, ໂດຍສະເພາະການເດີນທາງໄປສອນສາດສະໜາຂອງໂປໂລ, ຫລັງຈາກການສິ້ນພຣະຊົນຂອງພຣະຄຣິດ. ຈົດໝາຍຂອງໂປໂລໃຫ້ຄຳແນະນຳແກ່ຜູ້ນຳ ແລະ ສະມາຊິກຂອງສາດສະໜາຈັກ. ຈົດໝາຍອື່ນໆໄດ້ຖືກຂຽນໂດຍອັກຄະສາວົກຄົນອື່ນໆ ແລະ ໃຫ້ຄຳແນະນຳເພີ່ມເຕີມແກ່ໄພ່ພົນຍຸກສຸດທ້າຍລຸ້ນເດີມ. ພຣະທຳພຣະນິມິດ, ຊຶ່ງຂຽນໂດຍອັກຄະສາວົກໂຢຮັນ, ສ່ວນຫລາຍບັນຈຸຄຳທຳນາຍທີ່ກ່ຽວກັບຍຸກສຸດທ້າຍ.

**ພຣະເຈົ້າ, ຝ່າຍພຣະເຈົ້າ.** *ເບິ່ງ* ພຣະບິດາຜູ້ສະຖິດຢູ່ໃນສະຫວັນ; ພຣະຜູ້ເປັນເຈົ້າ; ພຣະເຢຊູຄຣິດ; ພຣະວິນຍານບໍລິສຸດ *ນຳອີກ*

ມີສາມພຣະອົງຢູ່ໃນຝ່າຍພຣະເຈົ້າ: ພຣະເຈົ້າ, ພຣະບິດາຜູ້ສະຖິດນິລັນດອນ; ພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ; ແລະ ພຣະວິນຍານບໍລິສຸດ. ພວກເຮົາເຊື່ອໃນແຕ່ລະພຣະອົງ (ຫຼຊ 1:1). ຈາກການເປີດເຜີຍຍຸກ

ສຸດທ້າຍ ພວກເຮົາຮຽນຮູ້ວ່າ ພຣະບິດາ ແລະ ພຣະບຸດ ມີພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ ແລະ ວ່າພຣະວິນຍານບໍລິສຸດມີພຣະກາຍທີ່ເປັນພຣະວິນຍານ, ປາດສະຈາກເນື້ອໜັງ ແລະ ກະດູກ (ຄພ 130:22–23). ສາມພຣະອົງນີ້ເປັນໜຶ່ງ ແລະ ຖືກຕ້ອງປອງດອງກັນຢ່າງສົມບູນແບບໃນຈຸດປະສົງ ແລະ ຄຳສອນ (ຢຮ 17:21–23; 2 ນຟ 31:21; 3 ນຟ 11:27, 36).

*ພຣະເຈົ້າອົງເປັນພຣະບິດາ:* ໂດຍທົ່ວໄປແລ້ວແມ່ນພຣະບິດາ, ຫລື ເອໂລຮິມ, ຜູ້ທີ່ກ່າວເຖິງວ່າມີຕຳແໜ່ງເປັນ ພຣະເຈົ້າ. ພຣະອົງຖືກເອີ້ນວ່າ ພຣະບິດາ ເພາະພຣະອົງເປັນພຣະບິດາຂອງວິນຍານຂອງເຮົາ (ຈບຊ 16:22; 27:16; ມລກ 2:10; ມທ 6:9; ອຟຊ 4:6; ຮຣ 12:9). ພຣະເຈົ້າອົງເປັນພຣະບິດາເປັນຜູ້ປົກຄອງສູງສຸດແຫ່ງຈັກກະວານ. ພຣະອົງມີອຳນາດທັງໝົດ (ປຖກ 18:14; ແອວ 26:35; ຄພ 19:1–3), ຮູ້ຈັກທຸກຢ່າງ (ມທ 6:8; 2 ນຟ 2:24), ແລະ ປະທັບຢູ່ໃນທຸກບ່ອນຜ່ານທາງພຣະວິນຍານຂອງພຣະອົງ (ພສສ 139:7–12; ຄພ 88:7–13, 41). ມະນຸດຊາດມີຄວາມສຳພັນພິເສດກັບພຣະເຈົ້າທີ່ເຮັດໃຫ້ມະນຸດແຕກຕ່າງຈາກທຸກສິ່ງທີ່ໄດ້ຖືກສ້າງມາ: ຊາຍ ແລະ ຍິງເປັນລູກໆທາງວິນຍານຂອງພຣະເຈົ້າ (ພສສ 82:6; 1 ຢຮ 3:1–3; ຄພ 20:17–18).

ມີບັນທຶກໄວ້ຫລາຍຕອນເຖິງພຣະເຈົ້າອົງເປັນພຣະບິດາ ທີ່ໄດ້ມາປະກົດ ແລະ ກ່າວຕໍ່ມະນຸດ. ພຣະຄຳພີກ່າວວ່າພຣະອົງໄດ້ກ່າວຕໍ່ອາດາມ ແລະ ເອວາ (ມຊ 4:14–31) ແລະ ໄດ້ແນະນຳພຣະເຢຊູຄຣິດ ຫລາຍເທື່ອ (ມທ 3:17; 17:5; ຢຮ 12:28–29; 3 ນຟ 11:3–7). ພຣະອົງໄດ້ປະກົດຕົວຕໍ່ສະເຕຟາໂນ (ກຈກ 7:55–56) ແລະ ໂຈເຊັບ ສະມິດ (ຈສ—ປ 1:17). ຕໍ່ມາພຣະອົງໄດ້ປະກົດຕົວຕໍ່ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນ (ຄພ 76:20, 23). ຕໍ່ຜູ້ທີ່ຮັກພຣະເຈົ້າ ແລະ ໄດ້ຊຳລະລ້າງຕົນເອງຢູ່ຕໍ່ພຣະພັກຂອງພຣະອົງ, ບາງເທື່ອພຣະເຈົ້າຈະປະທານສິດທິພິເສດໃຫ້ເຫັນ ແລະ ຮູ້ດ້ວຍຕົນເອງວ່າ ພຣະອົງເປັນພຣະເຈົ້າ (ມທ 5:8; 3 ນຟ 12:8; ຄພ 76:116–118; 93:1).

ພຣະເຈົ້າຂອງຂ້ານ້ອຍ, ພຣະເຈົ້າຂອງຂ້ານ້ອຍເອີຍ, ດ້ວຍເຫດໃດພຣະອົງຈຶ່ງປະຖິ້ມຂ້ານ້ອຍເສຍ, **ມຣກ** 15:34. ຄົນເຫລົ່ານີ້ເປັນຜູ້ຮັບໃຊ້ຂອງພຣະເຈົ້າອົງສູງສຸດ, **ກຈກ** 16:17. ເຮົາເປັນເຊື້ອສາຍຂອງພຣະເຈົ້າ, **ກຈກ** 17:28–29.

ເຈົ້າຕ້ອງຖວາຍສິບລະລຶກຂອງເຈົ້າແດ່ພຣະຜູ້ສູງສຸດ, **ຄພ** 59:10–12.

ເອນົກໄດ້ເຫັນວິນຍານທີ່ພຣະເຈົ້າໄດ້ສ້າງ, **ມຊ** 6:36. ພຣະຜູ້ບໍລິສຸດຄືພຣະນາມຂອງພຣະອົງ, **ມຊ** 6:57.

*ພຣະເຈົ້າອົງເປັນພຣະບຸດ:* ພຣະເຈົ້າອົງທີ່ຮູ້ຈັກກັນວ່າ ພຣະເຢໂຮວາ ຄື ພຣະບຸດ ພຣະເຢຊູຄຣິດ (ອຊຢ 12:2; 43:11; 49:26; 1 ກຣທ 10:1–4; 1 ຕມທ 1:1; ພນມ 1:8; 2 ນຟ 22:2). ພຣະເຢຊູເຮັດວຽກງານພາຍໃຕ້ການຊີ້ນຳຂອງພຣະບິດາ ແລະ ເປັນໜຶ່ງຮ່ວມກັບພຣະອົງ. ມະນຸດຊາດທັງປວງເປັນອ້າຍເອື້ອຍນ້ອງຂອງພຣະອົງ, ເພາະພຣະອົງເປັນອ້າຍໃຫຍ່ຂອງລູກໆຂອງເອໂລຮິມ. ຂໍ້ອ້າງອີງພຣະຄຳພີບາງຂໍ້ກ່າວເຖິງພຣະອົງໂດຍຄຳທີ່ວ່າ ພຣະເຈົ້າ. ຍົກຕົວຢ່າງ, ພຣະຄຳພີກ່າວວ່າ "ພຣະເຈົ້າໄດ້ສ້າງສະຫວັນ ແລະ ແຜ່ນດິນໂລກ" (ປຖກ 1:1), ແຕ່ແທ້ໆແລ້ວແມ່ນພຣະເຢຊູ ທີ່ໄດ້ເປັນພຣະຜູ້ສ້າງພາຍໃຕ້ການຊີ້ນຳຂອງພຣະເຈົ້າອົງເປັນພຣະບິດາ (ຢຮ 1:1–3, 10, 14; ຮຣ 1:1–2).

ພຣະຜູ້ເປັນເຈົ້າແຈ້ງບອກຕົນເອງວ່າ ເຮົາເປັນຜູ້ເຮົາເປັນ, **ອພຍ** 3:13–16. ເຮົາຄືພຣະຜູ້ເປັນເຈົ້າ [ພຣະເຢໂຮວາ], ແລະ ນອກຈາກເຮົາ ບໍ່ມີພຣະຜູ້ຊ່ວຍໃຫ້ລອດອື່ນໃດອີກແລ້ວ, **ອຊຢ** 43:11 (ອຊຢ 45:21).

ເຮົາເປັນຄວາມສະຫວ່າງຂອງໂລກ, **ຢຮ** 8:12. ກ່ອນອັບຣາຮາມເກີດ ເຮົານີ້ກໍເປັນຢູ່ແລ້ວ, **ຢຮ** 8:58.

ພຣະຜູ້ເປັນເຈົ້າຈະປະຕິບັດສາດສະໜາກິດໃນບັນດາຜູ້ຄົນຢູ່ໃນຮ່າງກາຍທີ່ເຮັດດ້ວຍດິນໜຽວ, **ມຊຢ** 3:5–10. ອະບິນາໄດໄດ້ອະທິບາຍເຖິງການທີ່ພຣະຄຣິດເປັນທັງພຣະບິດາ ແລະ ພຣະບຸດ, **ມຊຢ** 15:1–4 (ອທ 3:14). ພຣະຜູ້ເປັນເຈົ້າໄດ້ມາປະກົດຕໍ່ນ້ອງຊາຍຂອງ

ຢາເຣັດ, **ອທ** 3. ຈົ່ງຟັງພຣະຄຳຂອງພຣະຄຣິດ ພຣະຜູ້ເປັນເຈົ້າ ແລະ ພຣະເຈົ້າຂອງເຈົ້າ, **ມຣມ** 8:8. ພຣະເຢໂຮວາເປັນຜູ້ພິພາກສາຂອງທັງຄົນເປັນ ແລະ ຄົນຕາຍ, **ມຣມ** 10:34.

ພຣະເຢຊູໄດ້ມາປະກົດຕໍ່ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນ, **ຄພ** 76:20, 23. ພຣະຜູ້ເປັນເຈົ້າພຣະເຢໂຮວາໄດ້ມາປະກົດຕົວໃນພຣະວິຫານເຄີດແລນ, **ຄພ** 110:1–4.

ພຣະເຢໂຮວາໄດ້ກ່າວກັບອັບຣາຮາມ, **ອຣຮ** 1:16–19. ພຣະເຢຊູໄດ້ມາປະກົດຕໍ່ໂຈເຊັບ ສະມິດ, **ຈສ—ປ** 1:17.

*ພຣະເຈົ້າອົງເປັນພຣະວິນຍານບໍລິສຸດ:* ພຣະວິນຍານບໍລິສຸດກໍເປັນພຣະເຈົ້າຄືກັນ ແລະ ຍັງຖືກເອີ້ນວ່າພຣະວິນຍານສັກສິດ, ພຣະວິນຍານ, ແລະ ພຣະວິນຍານຂອງພຣະເຈົ້ານຳອີກ ໃນບັນດາພຣະນາມ ແລະ ຕຳແໜ່ງອື່ນໆທີ່ຄ້າຍຄືກັນນີ້. ດ້ວຍຄວາມຊ່ວຍເຫລືອຂອງພຣະວິນຍານບໍລິສຸດ, ມະນຸດສາມາດຮູ້ຈັກພຣະປະສົງຂອງພຣະເຈົ້າອົງເປັນພຣະບິດາ ແລະ ຮູ້ວ່າພຣະເຢຊູຄື ພຣະຄຣິດ (1 ກຣທ 12:3).

ພຣະວິນຍານບໍລິສຸດຈະສິດສອນພວກເຈົ້າໃນເວລານັ້ນວ່າຄວນຈະເວົ້າຢ່າງໃດ, **ລກ** 12:12. ພຣະຜູ້ຊ່ວຍຄືພຣະວິນຍານບໍລິສຸດ, **ຢຮ** 14:26 (ຢຮ 16:7–15). ພຣະເຢຊູໄດ້ໃຫ້ຄຳແນະນຳແກ່ບັນດາອັກຄະສາວົກດ້ວຍລິດເດດຂອງພຣະວິນຍານບໍລິສຸດ, **ກຈກ** 1:2. ພຣະວິນຍານບໍລິສຸດເປັນພະຍານເຖິງພຣະເຈົ້າ ແລະ ພຣະຄຣິດ, **ກຈກ** 5:29–32 (1 ກຣທ 12:3). ພຣະວິນຍານບໍລິສຸດກໍເປັນພະຍານໃຫ້ແກ່ພວກເຮົາເໝືອນກັນ, **ຮຣ** 10:10–17.

ໂດຍອຳນາດຂອງພຣະວິນຍານບໍລິສຸດທ່ານຈະຮູ້ຈັກຄວາມຈິງຂອງທຸກເລື່ອງ, **ມຣມ** 10:5.

ພຣະວິນຍານບໍລິສຸດເປັນພຣະວິນຍານແຫ່ງການເປີດເຜີຍ, **ຄພ** 8:2–3 (ຄພ 68:4).

**ພຣະທຳ.** *ເບິ່ງ* ມັດທາຍ; ມາຣະໂກ; ໂຢຮັນ, ລູກຊາຍຂອງເຊເບດາຍ; ລູກາ *ນຳອີກ*

ບັນທຶກ ຫລື ປະຈັກພະຍານສີ່ເຫລັ້ມເຖິງຊີວິດມະຕະຂອງພຣະເຢຊູ ແລະ ເຫດການຕ່າງໆກ່ຽວກັບການປະຕິບັດສາດສະໜາກິດຂອງພຣະອົງໃນໜັງສືສີ່ເຫລັ້ມທຳອິດຂອງພຣະຄຳພີໃໝ່. ໜັງສືທີ່ຂຽນໂດຍມັດທາຍ, ມາຣະໂກ, ລູກາ, ແລະ ໂຢຮັນ, ໄດ້ບັນທຶກການເປັນພະຍານເຖິງຊີວິດຂອງພຣະຄຣິດ. ໜັງສື 3 ນີໄຟ ຢູ່ໃນພຣະຄຳພີມໍມອນ ມີຄວາມຄ້າຍຄືກັນໃນຫລາຍວິທີທາງກັບພຣະທຳສີ່ເຫລັ້ມເຫລົ່ານີ້ໃນພຣະຄຳພີໃໝ່.

ຕົ້ນສະບັບຂອງໜັງສືຕ່າງໆໃນພຣະຄຳພີໃໝ່ຖືກຂຽນໃນພາສາກຣີກ. ຄຳວ່າ ພຣະກິດຕິຄຸນ ໃນພາສາກຣີກແປວ່າ "ຂ່າວປະເສີດ." ຂ່າວປະເສີດນັ້ນຄື ພຣະເຢຊູຄຣິດໄດ້ຊົດໃຊ້ຊຶ່ງຈະໄຖ່ມະນຸດຊາດທັງປວງຈາກຄວາມຕາຍ ແລະ ປະທານລາງວັນໃຫ້ແຕ່ລະຄົນຕາມວຽກງານຂອງເຂົາ (ຢຮ 3:16; ຣມ 5:10–11; 2 ນຟ 9:26; ແອວ 34:9; ຄພ 76:69).

ເບິ່ງ ຄວາມກົມກຽວຂອງພຣະກິດຕິຄຸນໃນພາກຫ້ອຍທ້າຍນຳອີກ

**ພຣະນິມິດຂອງໂຢຮັນ.** *ເບິ່ງ* ໂຢຮັນ, ລູກຊາຍຂອງເຊເບດາຍ; ໜັງສືນິມິດ *ນຳອີກ*

ໜັງສືເຫລັ້ມສຸດທ້າຍຢູ່ໃນພຣະຄຳພີໃໝ່, ບັນຈຸການເປີດເຜີຍທີ່ມອບໃຫ້ແກ່ອັກຄະສາວົກໂຢຮັນ. ເພິ່ນໄດ້ຖືກອະນຸຍາດໃຫ້ເຫັນປະຫວັດສາດຂອງໂລກ, ໂດຍສະເພາະໃນຍຸກສຸດທ້າຍ (ພນມ 1:1–2; 1 ນຟ 14:18–27; ຄພ 77). ພຣະນິມິດຂອງໂຢຮັນ ກໍຮູ້ຈັກກັນອີກວ່າເປັນ ໜັງສືນິມິດ.

ໂຢຮັນໄດ້ຮັບການເປີດເຜີຍນີ້ກ່ຽວກັບວັນເວລາຂອງພຣະຜູ້ເປັນເຈົ້າ ຕອນຢູ່ເກາະປັດໂມ (ພນມ 1:9–10), ໃກ້ຝັ່ງເອເຊຍ, ບໍ່ໄກຈາກເມືອງເອເຟໂຊ. ບໍ່ຮູ້ຄັກແນ່ກ່ຽວກັບວັນທີຂອງການເປີດເຜີຍນີ້.

ຂໍ້ຄວາມສຳຄັນທີ່ຊ່ວຍໃຫ້ເຂົ້າໃຈໜັງສືນີ້ແມ່ນຮ່ວມຢູ່ໃນ 1 ນຟ 14:18–27 ແລະ ຄພ 77 (ອທ 4:15–16).

ບົດທີ 1–3 ເປັນຄຳນຳສູ່ປຶ້ມ ແລະ ຈົດໝາຍເຖິງສາດສະໜາຈັກເຈັດແຫ່ງໃນເອເຊຍ. ໂຢຮັນໄດ້ຂຽນຈົດໝາຍ ເພື່ອຊ່ວຍເຫລືອໄພ່ພົນຂອງພຣະເຈົ້າແກ້ບັນຫາບາງຢ່າງໂດຍ

ສະເພາະ. ບົດທີ 4–5 ບັນທຶກ ພາບນິມິດທີ່ໂຢຮັນໄດ້ຮັບ ທີ່ສະແດງເຖິງອຳນາດ ທີ່ສະຫງ່າຜ່າເຜີຍ ແລະ ຊອບທຳຂອງພຣະເຈົ້າ ແລະ ພຣະຄຣິດ. ໃນ ບົດທີ 6–9, 11, ໂຢຮັນໄດ້ບັນທຶກວ່າ ໄດ້ເຫັນໜັງສືເຫລັ້ມໜຶ່ງທີ່ມີຕາປະທັບເຈັດດວງ, ແຕ່ລະດວງເປັນຕົວແທນໃຫ້ໜຶ່ງພັນປີ ແຫ່ງປະຫວັດສາດຝ່າຍໂລກຂອງແຜ່ນດິນໂລກ. ສ່ວນຫລາຍແລ້ວບົດເຫລົ່ານີ້ກ່ຽວພັນກັບເຫດການທີ່ເກີດຂຶ້ນໃນຕາປະທັບດວງທີເຈັດ (ເບິ່ງ ພນມ 8–9; 11:1–15). ບົດທີ 10 ບັນຍາຍໜັງສືທີ່ໂຢຮັນໄດ້ກິນ. ໜັງສືດັ່ງກ່າວເປັນຕົວແທນໃຫ້ແກ່ພາລະກິດໃນອະນາຄົດ ທີ່ເພິ່ນຈະປະຕິບັດ. ບົດທີ 12 ບັນທຶກພາບນິມິດເຖິງຄວາມຊົ່ວຮ້າຍ ທີ່ໄດ້ເລີ່ມຕົ້ນໃນສະຫວັນ ເມື່ອຊາຕານໄດ້ກະບົດ ແລະ ຖືກຂັບໄລ່ອອກໄປ. ສົງຄາມທີ່ໄດ້ເລີ່ມຕົ້ນຢູ່ທີ່ນັ້ນໄດ້ດຳເນີນຕໍ່ໄປຢູ່ເທິງແຜ່ນດິນໂລກ. ໃນ ບົດທີ 13, 17–19, ໂຢຮັນໄດ້ບັນຍາຍເຖິງຄວາມຊົ່ວຮ້າຍຂອງອານາຈັກຢູ່ໃນໂລກທີ່ຄວບຄຸມໂດຍຊາຕານ ແລະ ໄດ້ບັນທຶກຊາຕາກຳຂອງພວກເຂົາ, ລວມທັງຄວາມພິນາດຄັ້ງສຸດທ້າຍຂອງຄວາມຊົ່ວຮ້າຍ. ບົດທີ 14–16 ບັນຍາຍເຖິງຄວາມຊອບທຳຂອງໄພ່ພົນຂອງພຣະເຈົ້າໃນບັນດາຂອງຄວາມຊົ່ວຮ້າຍ ບໍ່ດົນກ່ອນການສະເດັດມາຄັ້ງທີສອງຂອງພຣະຄຣິດ. ບົດທີ 20–22 ບັນຍາຍເຖິງໄລຍະພັນປີ, ເມືອງເຢຣູຊາເລັມໃໝ່ທີ່ສວຍງາມ, ແລະ ເຫດການສຸດທ້າຍແຫ່ງປະຫວັດສາດຂອງແຜ່ນດິນໂລກ.

**ພຣະບັນຍັດຂອງພຣະເຈົ້າ.** *ເບິ່ງ* ກົດ; ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ; ບາບ; ພຣະຄຳຂອງພຣະເຈົ້າ; ພຣະບັນຍັດ, ສິບປະການ *ນຳອີກ*

ກົດ ແລະ ຂໍ້ກຳນົດທີ່ພຣະເຈົ້າປະທານໃຫ້ມະນຸດຊາດ, ບໍ່ວ່າຈະເປັນສ່ວນຕົວ ຫລື ເປັນສ່ວນລວມ. ການຮັກສາພຣະບັນຍັດຈະນຳພອນຂອງພຣະຜູ້ເປັນເຈົ້າມາໃຫ້ຜູ້ທີ່ເຊື່ອຟັງ (ຄພ 130:21).

ໂນອາໄດ້ເຮັດຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ທຸກປະການ, **ປຖກ** 6:22. ໃຊ້ຊີວິດຕາມບັນຍັດ ແລະ ຄຳສັ່ງທັງຫລາຍຂອງເຮົາ, **ລລວ** 26:3. ຈົ່ງເຮັດຕາມຄຳທີ່ພໍ່ບອກສອນ, ແລະ ເຈົ້າຈະມີຊີວິດ, **ສພສ** 4:4 (ສພສ 7:2).

ຖ້າພວກເຈົ້າຮັກເຮົາ, ພວກເຈົ້າກໍຈະເຊື່ອຟັງກົດບັນຍັດຂອງເຮົາ, **ຢຮ** 14:15 (ຄພ 42:29). ເມື່ອພວກເຮົາຂໍສິ່ງໃດຈາກພຣະອົງ ພວກເຮົາກໍໄດ້ຮັບສິ່ງນັ້ນ, ເພາະພວກເຮົາເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ, **1 ຢຮ** 3:22. ກົດບັນຍັດຂອງພຣະອົງນັ້ນບໍ່ຍາກໜັກເກີນໄປ, **1 ຢຮ** 5:3.

ບໍ່ຫວັ່ນໄຫວໃນການຮັກສາພຣະບັນຍັດ, **1 ນຟ** 2:10. ພຣະຜູ້ເປັນເຈົ້າຈະບໍ່ໃຫ້ພຣະບັນຍັດ ນອກຈາກພຣະອົງຕຽມທາງໄວ້ໃຫ້, **1 ນຟ** 3:7. ຂ້າພະເຈົ້າກໍຕ້ອງເຮັດຕາມຄຳສັ່ງອັນເຄັ່ງຄັດຂອງພຣະເຈົ້າ, **ຢຄ** 2:10. ຕາບໃດທີ່ເຈົ້າຈະຮັກສາບັນຍັດຂອງເຮົາ ເຈົ້າຈະຮຸ່ງເຮືອງຢູ່ໃນແຜ່ນດິນ, **ຈຣ** 1:9 (ແອວ 9:13; 50:20). ຈົ່ງຮຽນຮູ້ໃນໄວໜຸ່ມຂອງລູກ ເພື່ອຮັກສາພຣະບັນຍັດຂອງພຣະເຈົ້າ, **ແອວ** 37:35.

ພຣະບັນຍັດເຫລົ່ານີ້ເປັນຂອງເຮົາ, **ຄພ** 1:24. ຈົ່ງຄົ້ນຄວ້າພຣະບັນຍັດເຫລົ່ານີ້, **ຄພ** 1:37. ຄົນທີ່ບໍ່ຮັກສາພຣະບັນຍັດຈະລອດບໍ່ໄດ້, **ຄພ** 18:46 (ຄພ 25:15; 56:2). ພຣະບັນຍັດຂອງເຮົາເປັນທາງຝ່າຍວິນຍານ; ມັນບໍ່ເປັນທາງຝ່າຍທຳມະຊາດ ຫລື ທາງຝ່າຍໂລກ, **ຄພ** 29:35. ພຣະບັນຍັດໄດ້ຖືກມອບໃຫ້ ເພື່ອວ່າເຮົາຈະສາມາດເຂົ້າໃຈພຣະປະສົງຂອງພຣະຜູ້ເປັນເຈົ້າ, **ຄພ** 82:8.

ຂ້າພະເຈົ້າບໍ່ຮູ້, ຍົກເວັ້ນແຕ່ພຣະຜູ້ເປັນເຈົ້າໄດ້ບັນຊາໃຫ້ຂ້າພະເຈົ້າເຮັດ, **ມຊ** 5:6. ພຣະຜູ້ເປັນເຈົ້າຈະພິສູດມະນຸດເພື່ອເບິ່ງວ່າພວກເຂົາຈະເຮັດທຸກສິ່ງທັງປວງສິ່ງໃດກໍຕາມທີ່ພຣະອົງບັນຊາພວກເຂົາ, **ອຣຮ** 3:25.

**ພຣະບັນຍັດສອງ.** *ເບິ່ງ* ເພັນຕາຕຸກ *ນຳອີກ*

ໜັງສືເຫລັ້ມທີຫ້າໃນພຣະຄຳພີເດີມ.

ພຣະບັນຍັດສອງບັນຈຸຄຳປາໄສສາມບົດສຸດທ້າຍຂອງໂມເຊ, ຊຶ່ງເພິ່ນໄດ້ກ່າວຢູ່ໃນທົ່ງໂມອາບກ່ອນເພິ່ນໄດ້ປ່ຽນສະພາບຮ່າງກາຍ. ຄຳປາໄສບົດທຳອິດ (ບົດທີ 1–4) ແມ່ນຄຳແນະນຳ. ບົດທີສອງ (ບົດທີ 5–26) ມີຢູ່

ດ້ວຍກັນສອງພາກ: (1) ບົດທີ 5–11—ພຣະບັນຍັດສິບປະການ ແລະ ຄຳອະທິບາຍກ່ຽວກັບກົດເຫລົ່ານັ້ນ; ແລະ (2) ບົດທີ 12–26—ຫລັກຂອງກົດ, ຊຶ່ງເປັນຈຸດໃຈກາງໃຫຍ່ຂອງໜັງສືທັງເຫລັ້ມ. ຄຳປາໄສບົດທີສາມ (ບົດທີ 27–30) ບັນຈຸການຕໍ່ພັນທະສັນຍາທີ່ສັກສິດລະຫວ່າງຊາວອິດສະຣາເອນ ແລະ ພຣະເຈົ້າ ແລະ ການປະກາດພອນທີ່ມາເຖິງເມື່ອເຊື່ອຟັງ ແລະ ຄຳສາບແຊ່ງທີ່ມາເຖິງເມື່ອບໍ່ເຊື່ອຟັງ. ບົດທີ 31–34 ບັນຍາຍເຖິງການນຳກົດໄປໃຫ້ຊາວເລວີ, ເພງຂອງໂມເຊ ແລະ ພອນອັນສຸດທ້າຍ, ແລະ ການຈາກໄປຂອງໂມເຊ.

**ພຣະບັນຍັດ, ສິບປະການ.** *ເບິ່ງ* ພຣະບັນຍັດຂອງພຣະເຈົ້າ; ໂມເຊ *ນຳອີກ*

ກົດສິບຂໍ້ທີ່ພຣະເຈົ້າໄດ້ປະທານໃຫ້ຜ່ານທາງສາດສະດາໂມເຊ ເພື່ອຄວບຄຸມການປະພຶດທາງໂລກ.

ໃນພາສາເຮັບເຣີ ກົດເຫລົ່ານີ້ຖືກເອີ້ນວ່າ "ສິບຄຳ." ມັນຍັງຖືກເອີ້ນວ່າ ພັນທະສັນຍາ ນຳອີກ (ພບຍ 9:9) ຫລື ປະຈັກພະຍານ (ອພຍ 25:21; 32:15). ພຣະບັນຍັດສິບປະການຂອງພຣະເຈົ້າທີ່ໄດ້ປະທານໃຫ້ໂມເຊ, ແລະ ຈາກເພິ່ນຕໍ່ໃຫ້ຊາວອິດສະຣາເອນ, ມີບັນຍາຍໄວ້ໃນ ອພຍ 19:9–20:23; 32:15–19; 34:1. ພຣະບັນຍັດໄດ້ຖືກສະຫລັກໄວ້ຢູ່ໃນຫີນສອງແຜ່ນ, ຊຶ່ງໄດ້ຖືກຮັກສາໄວ້ຢູ່ໃນຫີບຄຳໝັ້ນສັນຍາ; ສະນັ້ນແລ້ວ ຫີບຄຳໝັ້ນສັນຍາຈຶ່ງຖືກເອີ້ນວ່າຫີບພັນທະສັນຍາ (ຈບຊ 10:33). ພຣະຜູ້ເປັນເຈົ້າ, ຊຶ່ງອ້າງອີງຈາກ ພບຍ 6:4–5 ແລະ ລລວ 19:18, ໄດ້ສະຫລຸບພຣະບັນຍັດສິບປະການ ໃນ "ພຣະບັນຍັດທີ່ຍິ່ງໃຫຍ່ສອງຂໍ້" (ມທ 22:37–39).

ພຣະບັນຍັດສິບປະການໄດ້ຖືກກ່າວຍ້ຳອີກຢູ່ໃນການເປີດເຜີຍຍຸກສຸດທ້າຍ (ປຈສ, ອພຍ 34:1–2, 14 [ພາກຫ້ອຍທ້າຍ]; ມຊຢ 12:32–37; 13:12–24; ຄພ 42:18–28; 59:5–13).

**ພຣະບາອານ.** *ເບິ່ງ* ການນັບຖືຮູບບູຊາ *ນຳອີກ*

ພຣະເຈົ້າແຫ່ງດວງອາທິດເພດຊາຍ ຊຶ່ງມີຜູ້ຄົນນະມັດສະການເປັນສ່ວນໃຫຍ່ໃນໄປນິເຊຍ (1 ກສ 16:31) ແຕ່ໄດ້ນະມັດສະການໃນວິທີທີ່ແຕກຕ່າງກັນໃນສະຖານທີ່ຕ່າງໆ: ຊາວໂມອາບເອີ້ນວ່າ ພຣະບາອານແຫ່ງເປອໍ (ຈບຊ 25:1–3), ທີ່ເມືອງຊີເຄມຖືກເອີ້ນວ່າພຣະບາອານແຫ່ງຄຳໝັ້ນສັນຍາ (ຜປ 8:33; 9:4), ທີ່ເອັກໂຣນຖືກເອີ້ນວ່າພຣະບາອານເສບຸບ (2 ກສ 1:2). ພຣະບາອານອາດເປັນພຣະຊະນິດດຽວກັນກັບພຣະເບນແຫ່ງບາບີໂລນ ແລະ ຊີອຸດແຫ່ງກຣີກ. ຄຳວ່າພຣະບາອານ ສະແດງອອກເຖິງຄວາມສຳພັນລະຫວ່າງເຈົ້ານາຍ ແລະ ຂ້າທາດຂອງເຂົາ. ສັນຍາລັກທົ່ວໄປສຳລັບພຣະບາອານຄືໂຕງົວເຖິກ. ໂດຍທົ່ວໄປແລ້ວເຈົ້າແມ່ອັດຊະຕາກຖືກນະມັດສະການຄຽງຄູ່ໄປກັບພຣະບາອານ.

ບາງເທື່ອພຣະບາອານຖືກຮ່ວມເຂົ້າກັບຊື່ອື່ນ ຫລື ຄຳອື່ນ ເພື່ອສະແດງເຖິງຄວາມກ່ຽວພັນກັບພຣະບາອານ, ເຊັ່ນສະຖານທີ່ ຊຶ່ງເພິ່ນຖືກນະມັດສະການ ຫລື ບຸກຄົນທີ່ມີທັດສະນະເປັນເໝືອນດັ່ງພຣະບາອານ. ຕໍ່ມາ, ເພາະວ່າພຣະບາອານມີຄວາມໝາຍທີ່ຊົ່ວຮ້າຍຫລາຍ, ຄຳວ່າ ໂບເຊັດ ຈຶ່ງຖືກໃຊ້ແທນຊື່ ຊຶ່ງເອົາມາເຂົ້າຮ່ວມກັບຊື່ເຫລົ່ານັ້ນ. ໂບເຊັດ ແປວ່າ "ຄວາມອັບອາຍ."

**ພຣະບິດາເທິງສະຫວັນ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະບິດາຜູ້ສະຖິດຢູ່ໃນສະຫວັນ

**ພຣະບິດາຜູ້ສະຖິດນິລັນດອນ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະບິດາຜູ້ສະຖິດຢູ່ໃນສະຫວັນ

**ພຣະບິດາຜູ້ສະຖິດຢູ່ໃນສະຫວັນ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ນຳອີກ*

ພຣະບິດາຂອງດວງວິນຍານຂອງມະນຸດຊາດທັງປວງ (ພສສ 82:6; ມທ 5:48; ຢຮ 10:34; ຣມ 8:16–17; ຄລຕ 4:7; 1 ຢຮ 3:2). ພຣະເຢຊູເປັນພຣະບຸດອົງດຽວທີ່ຖືກກຳເນີດຂອງພຣະອົງໃນເນື້ອໜັງ. ມະນຸດໄດ້ຖືກບັນຊາໃຫ້ເຊື່ອຟັງ ແລະ ຄາລະວະຕໍ່ພຣະບິດາ ແລະ ໃຫ້ອະທິຖານຫາພຣະອົງໃນພຣະນາມຂອງພຣະເຢຊູ.

ຖ້າເຈົ້າຍົກໂທດໃຫ້ຄົນອື່ນທີ່ໄດ້ເຮັດຜິດຕໍ່ເຈົ້າ ພຣະບິດາເທິງສະຫວັນຂອງເຈົ້າກໍຈະຍົກໂທດໃຫ້ເຈົ້າເໝືອນກັນ, **ມທ** 6:14 (ມທ 18:35; 3 ນຟ 13:14). ພຣະບິດາເທິງສະຫວັນຮູ້ວ່າພວກເຈົ້າຕ້ອງການສິ່ງເຫລົ່ານີ້ແລ້ວ, **ມທ** 6:26–33 (3 ນຟ 13:26–33). ພຣະບິດາເທິງສະຫວັນຂອງພວກເຈົ້າຈະປະທານພຣະວິນຍານບໍລິສຸດແກ່ຜູ້ທີ່ຂໍຈາກພຣະອົງຫລາຍພຽງໃດ, **ລກ** 11:11–13. ສາທຸການແດ່ພຣະເຈົ້າຄືພຣະບິດາຂອງອົງພຣະເຢຊູຄຣິດເຈົ້າ, **ອຟຊ** 1:3.

ພວກທ່ານເປັນໜີ້ມາຕະຫລອດການຕໍ່ພຣະບິດາເທິງສະຫວັນຂອງພວກທ່ານ, **ມຊຢ** 2:34. ພຣະຄຣິດຖວາຍບາລະມີພຣະນາມຂອງພຣະບິດາ, **ອທ** 12:8.

ໄພ່ພົນຂອງພຣະເຈົ້າຄວນເປັນພະຍານເຖິງການຖືກຂົ່ມເຫັງຂອງເຂົາເຈົ້າກ່ອນທີ່ພຣະບິດາຈະອອກມາຈາກສະຖານທີ່ລີ້ລັບຂອງພຣະອົງ, **ຄພ** 123:1–3, 6.

ພວກເຮົາໄດ້ປະສົບກັບພອນອັນຍິ່ງໃຫຍ່ ແລະ ປະເສີດຈາກພຣະບິດາເທິງສະຫວັນ, **ຈສ—ປ** 1:73.

**ພຣະບຸດຂອງພຣະເຈົ້າ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະເຢຊູຄຣິດ

**ພຣະຜູ້ສ້າງ.** *ເບິ່ງ* ສ້າງ, ການສ້າງ; ພຣະເຢຊູຄຣິດ

**ພຣະຜູ້ຊ່ວຍໃຫ້ລອດ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ຜູ້ຊ່ວຍໃຫ້ລອດ. ຜ່ານການຊົດໃຊ້ຂອງພຣະອົງ, ພຣະເຢຊູຄຣິດໄດ້ສະເໜີການໄຖ່ ແລະ ຄວາມລອດໃຫ້ແກ່ມະນຸດຊາດທັງປວງ. "ພຣະຜູ້ຊ່ວຍໃຫ້ລອດ" ແມ່ນພຣະນາມ ແລະ ຕຳແໜ່ງຂອງພຣະເຢຊູຄຣິດ.

ພຣະຜູ້ເປັນເຈົ້າເປັນແສງແຈ້ງ ແລະ ເປັນຜູ້ຊ່ວຍໃຫ້ພົ້ນຂອງຂ້າພຣະອົງ, **ພສສ** 27:1 (ອພຍ 15:1–2; 2 ຊມອ 22:2–3). ເຮົາຄືພຣະຜູ້ເປັນເຈົ້າ; ແລະ ເຮົາຜູ້ດຽວເທົ່ານັ້ນທີ່ເປັນພຣະຜູ້ຊ່ວຍໃຫ້ລອດ, **ອຊຢ** 43:11 (ຄພ 76:1).

ຈົ່ງໃສ່ຊື່ໃຫ້ເດັກວ່າ ເຢຊູ: ເພາະເພິ່ນຈະໂຜດຊ່ວຍປະຊາຊົນຂອງຕົນໃຫ້ລອດພົ້ນຈາກບາບກຳຂອງພວກເຂົາ, **ມທ** 1:21. ໃນວັນນີ້ແກ່ພວກເຈົ້າ ພຣະຜູ້ຊ່ວຍໃຫ້ພົ້ນອົງໜຶ່ງ ຄືພຣະຄຣິດໄດ້ມາບັງເກີດ, **ລກ** 2:11. ພຣະເຈົ້າຮັກໂລກຈົນໄດ້ປະທານພຣະບຸດອົງດຽວທີ່ຖືກຳເນີດ ເພື່ອມະນຸດຈະພົ້ນໄດ້, **ຢຮ** 3:16–17. ບໍ່ມີນາມອື່ນໃດທົ່ວໃຕ້ຟ້າ ນອກຈາກຈະເປັນພຣະຄຣິດ ເພື່ອໃຫ້ມະນຸດທັງຫລາຍຕ້ອງໄດ້ພົ້ນ, **ກຈກ** 4:10–12 (2 ນຟ 25:20; ມຊຢ 3:17; 5:8; ຄພ 18:23; ມຊ 6:52). ເຮົາຄອງຄອຍພຣະຜູ້ໂຜດຊ່ວຍໃຫ້ພົ້ນ ສະເດັດມາຈາກສະຫວັນ ຄືອົງພຣະເຢຊູຄຣິດເຈົ້າ, **ຟລປ** 3:20. ພຣະບິດາໄດ້ໃຊ້ພຣະບຸດມາ ເປັນພຣະຜູ້ໂຜດຊ່ວຍມະນຸດສະໂລກ, **1 ຢຮ** 4:14.

ພຣະຜູ້ເປັນເຈົ້າໄດ້ລ້ຽງຄົນຜູ້ໜຶ່ງໃຫ້ເປັນພຣະເມຊີອາ, ພຣະຜູ້ຊ່ວຍໃຫ້ລອດຂອງໂລກ, **1 ນຟ** 10:4. ພຣະເມສານ້ອຍຂອງພຣະເຈົ້າເປັນພຣະຜູ້ຊ່ວຍໃຫ້ລອດຂອງໂລກ, **1 ນຟ** 13:40. ຄວາມຮູ້ເລື່ອງຂອງພຣະຜູ້ຊ່ວຍໃຫ້ລອດຈະແຜ່ໄປທົ່ວທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, **ມຊຢ** 3:20. ພຣະຄຣິດໄດ້ສິ້ນພຣະຊົນ ເພື່ອວ່າຄວາມລອດຈະມີມາ, **ຮລມ** 14:15–16.

ການຮັບຮອງ ແລະ ການຊຳລະໃຫ້ບໍລິສຸດຜ່ານພຣະຜູ້ຊ່ວຍໃຫ້ລອດ ແມ່ນຖືກຕ້ອງ ແລະ ຈິງ, **ຄພ** 20:30–31. ເຮົາຄືພຣະເຢຊູຄຣິດ, ພຣະຜູ້ຊ່ວຍໃຫ້ລອດຂອງໂລກ, **ຄພ** 43:34.

ພຣະອົງດຽວທີ່ຖືກຳເນີດຂອງເຮົາ ເປັນພຣະຜູ້ຊ່ວຍໃຫ້ລອດ, **ມຊ** 1:6. ຫລາຍຕໍ່ຫລາຍຄົນທີ່ໄດ້ເຊື່ອໃນພຣະບຸດ ແລະ ກັບໃຈຈາກບາບຂອງພວກເຂົາ ຈະລອດ, **ມຊ** 5:15.

**ພຣະຜູ້ໄຖ່.** *ເບິ່ງ* ພຣະຜູ້ຊ່ວຍໃຫ້ລອດ; ພຣະເຢຊູຄຣິດ *ນຳອີກ*

ພຣະເຢຊູຄຣິດ ເປັນພຣະຜູ້ໄຖ່ທີ່ຍິ່ງໃຫຍ່ຂອງມະນຸດຊາດ ເພາະວ່າພຣະອົງ, ຜ່ານການຊົດໃຊ້ຂອງພຣະອົງ, ໄດ້ຈ່າຍຄ່າແທນບາບຂອງມະນຸດຊາດ ແລະ ໄດ້ເຮັດໃຫ້ມີການຟື້ນຄືນຊີວິດຂອງຜູ້ຄົນທັງປວງ.

ຂ້ອຍ ຮູ້ ວ່າ ພຣະ ຜູ້ ໄຖ່ ຊົງ ພຣະ ຊົນ, **ໂຢບ** 19:25. ພຣະ ຜູ້ ໄຖ່ ອົງ ບໍລິສຸດຂອງອິດສະຣາເອນຈະຊ່ວຍພວກເຈົ້າ ໃຫ້ພົ້ນ, **ອຊຢ** 41:14 (ອຊຢ 43:14; 48:17; 54:5; 59:20). ເຮົາຄືອົງພຣະຜູ້ເປັນເຈົ້າ ຜູ້ຊ່ວຍຊູເຈົ້າໃຫ້ພົ້ນ ແລະ ຜູ້ໄຖ່ໂທດຂອງເຈົ້າ, **ອຊຢ** 49:26 (ອຊຢ 60:16).

ຈົ່ງ ໃສ່ ຊື່ໃຫ້ ເດັກ ນີ້ວ່າ ເຢຊູ: ເພາະ ເພິ່ນຈະ ຊ່ວຍ ປະຊາ ຊົນ ຂອງ ຕົນ ໃຫ້ ລອດພົ້ນຈາກບາບກຳຂອງພວກເຂົາ, **ມທ** 1:21. ບຸດມະນຸດໄດ້ມາເພື່ອສະລະຊີວິດຂອງຕົນເປັນຄ່າໄຖ່ຄົນຈຳນວນຫລວງຫລາຍ, **ມທ** 20:28 (1 ຕມທ 2:5–6). ອົງພຣະຜູ້ເປັນເຈົ້າຂອງອິດສະຣາເອນ ໄດ້ມາຢ້ຽມຢາມພົນລະເມືອງຂອງພຣະອົງ, **ລກ** 1:68. ພວກເຮົາໄດ້ຄືນດີກັບພຣະເຈົ້າ ໂດຍການສິ້ນພຣະຊົນຂອງພຣະອົງ, **ຣມ** 5:10. ພຣະເຢຊູຄຣິດໄດ້ສະລະພຣະອົງເອງແທນພວກເຮົາທັງຫລາຍ, ເພື່ອຊ່ວຍກູ້ເອົາພວກເຮົາໃຫ້ພົ້ນຈາກຄວາມຊົ່ວຮ້າຍທຸກຢ່າງ, **ຕຕ** 2:13–14. ພຣະເຢຊູຄຣິດໄດ້ຊຳລະເຮົາໃຫ້ສະອາດຈາກບາບຂອງເຮົາດ້ວຍໂລຫິດຂອງພຣະອົງເອງ, **ພນມ** 1:5.

ການໄຖ່ຈຶ່ງມາເຖິງໂດຍຜ່ານທາງພຣະເມຊີອາຜູ້ບໍລິສຸດ, **2 ນຟ** 2:6–7, 26. ພຣະບຸດໄດ້ຮັບເອົາຄວາມຊົ່ວຮ້າຍ ແລະ ການລ່ວງລະເມີດຂອງພວກເຂົາມາໄວ້ນຳພຣະອົງເອງ, ແລະ ໄຖ່ພວກເຂົາ, ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຄວາມຍຸດຕິທຳ, **ມຊຢ** 15:6–9, 18–27. ພຣະຄຣິດໄດ້ສະເດັດມາເພື່ອໄຖ່ທຸກຄົນທີ່ໄດ້ຮັບບັບຕິສະມາໄວ້ກັບການກັບໃຈ, **ແອວ** 9:26–27. ພຣະອົງຈະສະເດັດມາໃນໂລກນີ້ເພື່ອໄຖ່ຜູ້ຄົນຂອງພຣະອົງ, **ແອວ** 11:40–41. ການໄຖ່ມາເຖິງຜ່ານການກັບໃຈ, **ແອວ** 42:13–26. ພຣະເຢຊູຄຣິດໄດ້ສະເດັດມາເພື່ອໄຖ່ໂລກ, **ຮລມ** 5:9–12. ພຣະຄຣິດໄດ້ໄຖ່ມະນຸດຊາດຈາກຄວາມຕາຍທາງຮ່າງກາຍ ແລະ ວິນຍານ, **ຮລມ** 14:12–17. ການໄຖ່ຈຶ່ງມາເຖິງໂດຍຜ່ານທາງພຣະຄຣິດ, **3 ນຟ** 9:17. ເຮົາຄືຜູ້ທີ່ຖືກຕຽມໄວ້ນັບຕັ້ງແຕ່ການວາງຮາກຖານຂອງໂລກ ເພື່ອໄຖ່ຖອນຜູ້ຄົນຂອງເຮົາ, **ອທ** 3:14.

ພຣະຜູ້ເປັນເຈົ້າ ພຣະຜູ້ໄຖ່ຂອງເຈົ້າໄດ້ຮັບຄວາມຕາຍ ໃນ ເນື້ອໜັງ, **ຄພ** 18:11. ພຣະຄຣິດ ໄດ້ ທົນ ທຸກທໍລະມານ ເພື່ອ ທຸກຄົນຖ້າຫາກພວກເຂົາກັບໃຈ, **ຄພ** 19:1, 16–20. ເດັກນ້ອຍໆໄດ້ຮັບການໄຖ່ຜ່ານພຣະອົງດຽວທີ່ຖືກຳເນີດ, **ຄພ** 29:46. ເຮົາໄດ້ສົ່ງພຣະບຸດອົງດຽວທີ່ຖືກຳເນີດຂອງເຮົາມາຍັງໂລກເພື່ອການໄຖ່ໂລກ, **ຄພ** 49:5. ພຣະຄຣິດເປັນຄວາມສະຫວ່າງ ແລະ ພຣະຜູ້ໄຖ່ຂອງໂລກ, **ຄພ** 93:8–9. ໂຈເຊັບ ແອັຟ ສະມິດ ໄດ້ຮັບພາບນິມິດກ່ຽວກັບການໄຖ່ຄົນຕາຍ, **ຄພ** 138.

ພວກເຮົາເຊື່ອວ່າ ໂດຍທາງການຊົດໃຊ້ຂອງພຣະຄຣິດ, ມະນຸດຊາດທັງປວງຈະລອດ, **ຫຼຊ** 1:3.

**ພຣະຜູ້ບໍລິສຸດ.** *ເບິ່ງ* ບຸດມະນຸດ; ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະບິດາຜູ້ສະຖິດຢູ່ໃນສະຫວັນ *ນຳອີກ*

ພຣະນາມໜຶ່ງອີກສຳລັບພຣະເຈົ້າ ອົງເປັນພຣະບິດາ (ມຊ 6:57).

**ພຣະຜູ້ບໍລິສຸດຂອງອິດສະຣາເອນ.** *ເບິ່ງ* ພຣະເຢຊູຄຣິດ

**ພຣະຜູ້ເປັນກາງ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ *ນຳອີກ*

ຜູ້ເຮັດແທນ ຫລື ຄົນໄກ່ເກ່ຍ. ພຣະເຢຊູຄຣິດເປັນຜູ້ເປັນກາງລະຫວ່າງພຣະເຈົ້າກັບມະນຸດ. ການຊົດໃຊ້ຂອງພຣະອົງໄດ້ເຮັດໃຫ້ເປັນໄປໄດ້ສຳລັບມະນຸດທີ່ຈະກັບໃຈສຳລັບບາບຂອງເຂົາ ແລະ ກັບມາປອງດອງກັບພຣະເຈົ້າ.

ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງພຣະເຢຊູຄຣິດ, **ຢຮ** 14:6. ມີຜູ້ເປັນກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ, **1 ຕມທ** 2:5. ພຣະຄຣິດເປັນຜູ້ເປັນກາງຂອງພັນທະສັນຍາທີ່ດີກວ່າ, **ຮຣ** 8:6 (ຮຣ 9:15; 12:24; ຄພ 107:19).

ພຣະເມຊີອາທີ່ສັກສິດຈະວິງວອນແທນລູກຫລານມະນຸດທັງປວງ, **2 ນຟ** 2:9 (ອຊຢ 53:12; ມຊຢ 14:12). ລູກຄວນຫວັງເພິ່ງພຣະຜູ້ເປັນກາງທີ່ຍິ່ງໃຫຍ່ອົງນີ້, **2 ນຟ** 2:27–28.

ພວກເຮົາຖືກເຮັດໃຫ້ດີພ້ອມທຸກຢ່າງຜ່ານ ພຣະເຢຊູຜູ້ເປັນກາງຂອງພັນທະສັນຍາໃໝ່, **ຄພ** 76:69.

**ພຣະຜູ້ເປັນເຈົ້າ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະເຢຊູຄຣິດ *ນຳອີກ*

ຕຳແໜ່ງທີ່ມີຄວາມນັບຖື ແລະ ໃຫ້ກຽດຢ່າງເລິກຊຶ້ງຕໍ່ ພຣະເຈົ້າ ອົງເປັນພຣະບິດາ ແລະ ພຣະຜູ້ຊ່ວຍໃຫ້ລອດ ພຣະເຢຊູຄຣິດ. ຕຳແໜ່ງນີ້ອ້າງເຖິງໜ້າທີ່ຂອງພວກພຣະອົງວ່າ ເປັນພຣະຜູ້ສູງສຸດ, ເປັນພຣະອາຈານທີ່ຊົງຮັກ ປົກຄອງການສ້າງຂອງພວກພຣະອົງ.

ມີຫຍັງແດ່ຍາກສຳລັບພຣະຜູ້ເປັນເຈົ້າ, **ປຖກ** 18:14. ພຣະຜູ້ເປັນເຈົ້າກ່າວແກ່ໂມເຊໜ້າຕໍ່ໜ້າ, **ອພຍ** 33:11. ຈົ່ງຮັກພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດຫົວໃຈ, **ພບຍ** 6:5 (ມທ 22:37; ມຣກ 12:30). ສ່ວນຂ້າພະເຈົ້າກັບຄອບຄົວຂອງຂ້າພະເຈົ້າແລ້ວ ພວກເຮົາຈະບົວລະບັດຮັບໃຊ້ພຣະຜູ້ເປັນເຈົ້າ, **ຢຊ** 24:15. ພຣະຜູ້ເປັນເຈົ້າເປັນຜູ້ລ້ຽງຂອງຂ້າພຣະອົງ, **ພສສ** 23:1. ພຣະອົງມີລິດທານຸພາບ ແລະ ເຂັ້ມແຂງ, ມີໄຊໃນສະໜາມຮົບ, **ພສສ** 24:8. ພຣະຜູ້ເປັນເຈົ້າ ພຣະເຢໂຮວາ ເປັນຜູ້ຊ່ວຍຊູຂ້າພຣະອົງ, **ອຊຢ** 12:2 (2 ນຟ 22:2). ເຮົາພຣະຜູ້ເປັນເຈົ້າເປັນພຣະຜູ້ຊ່ວຍໃຫ້ລອດຂອງເຈົ້າ ແລະ ພຣະຜູ້ໄຖ່ຂອງເຈົ້າ, **ອຊຢ** 60:16.

ຈົ່ງຂາບໄຫວ້ນະມັດສະການພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງທ່ານ, **ມທ** 4:10 (ລກ 4:8). ເຫດການອັນໃຫຍ່ຍິ່ງທີ່ພຣະຜູ້ເປັນເຈົ້າໄດ້ກະທຳ, **ມຣກ** 5:19. ມີອົງພຣະເຢຊູຄຣິດເຈົ້າອົງດຽວ, **1 ກຣທ** 8:6. ມີພຣະຜູ້ເປັນເຈົ້າອົງດຽວ, ມີຄວາມເຊື່ອດຽວ, ມີບັບຕິສະມາດຽວ, **ອຟຊ** 4:5. ພຣະຜູ້ເປັນເຈົ້າເອງຈະສະເດັດລົງມາຈາກສະຫວັນ, **1 ທສນ** 4:16.

ເຮົາຈະໄປ ແລະ ເຮັດສິ່ງທີ່ພຣະຜູ້ເປັນເຈົ້າບັນຊາ, **1 ນຟ** 3:7. ພຣະຜູ້ເປັນເຈົ້າຈະພິພາກສາຄົນຍາກຈົນດ້ວຍຄວາມຊອບທຳ, **2 ນຟ** 30:9. ອົງພຣະຜູ້ເປັນເຈົ້າ, ພຣະເຈົ້າຂອງອັບຣາຮາມ, ໄດ້ປົດປ່ອຍຊາວອິດສະຣາເອນຈາກຄວາມເປັນທາດ, **ແອວ** 29:11. ຈະບໍ່ມີສິ່ງໃດຈະຊ່ວຍໃຫ້ຜູ້ຄົນພວກນີ້ລອດໄດ້ນອກຈາກການກັບໃຈ ແລະ ມີສັດທາໃນພຣະຜູ້ເປັນເຈົ້າ, **ຮລມ** 13:6 (ມຊຢ 3:12).

ຈົ່ງຟັງພຣະຄຳຂອງພຣະເຢຊູຄຣິດ, ພຣະຜູ້ເປັນເຈົ້າຂອງເຈົ້າ, **ຄພ** 15:1. ຈົ່ງສະແຫວງຫາພຣະພັກຂອງພຣະຜູ້ເປັນເຈົ້າສະເໝີໄປ, **ຄພ** 101:38. ພຣະຜູ້ເປັນເຈົ້າຈະແຕ່ງກາຍໃນສີແດງ ໃນການສະເດັດມາຄັ້ງທີສອງ, **ຄພ** 133:48 (ອຊຢ 63:1–4).

ອັບຣາຮາມໄດ້ກ່າວກັບພຣະຜູ້ເປັນເຈົ້າໜ້າຕໍ່ໜ້າ, **ອຣຮ** 3:11. ພວກເຮົາເຊື່ອວ່າ ຫລັກທຳເບື້ອງຕົ້ນແຫ່ງພຣະກິດຕິຄຸນຄື ສັດທາໃນອົງພຣະເຢຊູຄຣິດເຈົ້າ, **ຫຼຊ** 1:4.

**ພຣະຜູ້ປົດປ່ອຍ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ພຣະເຢຊູຄຣິດເປັນພຣະຜູ້ປົດປ່ອຍຂອງມະນຸດຊາດ ເພາະວ່າພຣະອົງຊ່ວຍກູ້ທຸກຄົນຈາກຄວາມເປັນທາດຂອງຄວາມຕາຍ ແລະ ຄົນທີ່ກັບໃຈຈາກໂທດແຫ່ງການບາບ.

ພຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງຂ້າພຣະອົງ ແລະ ເປັນປ້ອມປ້ອງກັນຂ້າພຣະອົງ, **2 ຊມອ** 22:2 (ພສສ 18:2; 144:2). ພຣະອົງຄືພຣະຜູ້ຊ່ວຍໃຫ້ພົ້ນຂອງຂ້າພຣະອົງ, **ພສສ** 40:17 (ພສສ 70:5).

ພຣະຜູ້ໂຜດຊ່ວຍໃຫ້ພົ້ນຈະມາຈາກພູຊີໂອນ, **ຣມ** 11:26.

ໄພ່ພົນຂອງພຣະເຈົ້າຮັບຮູ້ພຣະບຸດຂອງພຣະເຈົ້າວ່າເປັນພຣະຜູ້ໄຖ່ ແລະ ພຣະຜູ້ປົດປ່ອຍຂອງເຂົາເຈົ້າ, **ຄພ** 138:23.

**ພຣະຜູ້ປອບໂຍນ.** *ເບິ່ງ* ພຣະເຢຊູຄຣິດ; ພຣະວິນຍານບໍລິສຸດ *ນຳອີກ*

ພຣະຄຳພີກ່າວເຖິງພຣະຜູ້ປອບໂຍນສອງອົງ. ອົງທຳອິດແມ່ນພຣະວິນຍານບໍລິສຸດ (ຢຮ 14:26–27; ມຣນ 8:26; ຄພ 21:9; 42:17; 90:11). ພຣະຜູ້ປອບໂຍນອົງທີສອງແມ່ນອົງພຣະເຢຊູຄຣິດເຈົ້າ (ຢຮ 14:18, 21, 23). ເມື່ອບາງຄົນຮັບເອົາພຣະຜູ້ປອບໂຍນອົງທີສອງ, ພຣະເຢຊູຄຣິດຈະມາປະກົດຕໍ່ເຂົາເປັນບາງຄັ້ງ, ຈະເປີດເຜີຍພຣະບິດາ, ແລະ ຈະສິດສອນເຂົາໜ້າຕໍ່ໜ້າ (ຄພ 130:3).

**ພຣະຜູ້ປອບໂຍນອົງທີສອງ.** *ເບິ່ງ* ພຣະຜູ້ປອບໂຍນ

**ພຣະເມສານ້ອຍຂອງພຣະເຈົ້າ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ປັດສະຄາ; ພຣະເຢຊູຄຣິດ *ນຳອີກ*

ພຣະນາມໜຶ່ງອີກສຳລັບພຣະຜູ້ຊ່ວຍໃຫ້ລອດຊຶ່ງອ້າງວ່າພຣະເຢຊູໄດ້ເປັນເຄື່ອງຖວາຍເສຍສະລະແທນພວກເຮົາ.

ພຣະອົງໄດ້ຖືກນຳໄປຂ້າເໝືອນດັ່ງລູກແກະ, **ອຊຢ** 53:7 (ມຊຢ 14:7).

ເບິ່ງແມ, ພຣະເມສານ້ອຍຂອງພຣະເຈົ້າຜູ້ໄດ້ຮັບເອົາບາບກຳຂອງໂລກອອກເສຍ, **ຢຮ** 1:29 (ແອວ 7:14). ພວກເຈົ້າໄດ້ຖືກໄຖ່ດ້ວຍພຣະໂລຫິດອັນມີຄ່າຂອງພຣະຄຣິດ, ເໝືອນດັ່ງເລືອດລູກແກະທີ່ບໍ່ມີຕຳໜິ ຫລື ຮອຍດ່າງ, **1 ປຕ** 1:18–20. ພຣະເມສານ້ອຍທີ່ຖືກຂ້າແລ້ວນັ້ນເປັນຜູ້ສົມຄວນ, **ພນມ** 5:12. ເຮົາເອົາຊະນະຊາຕານແລ້ວດ້ວຍໂລຫິດຂອງພຣະເມສານ້ອຍ, **ພນມ** 12:11.

ອາພອນເຫລົ່ານີ້ຖືກເຮັດໃຫ້ຂາວສະອາດໃນໂລຫິດຂອງພຣະເມສານ້ອຍ ຍ້ອນວ່າພວກເຂົາມີສັດທາໃນພຣະອົງ, **1 ນຟ** 12:11. ພຣະເມສານ້ອຍຂອງພຣະເຈົ້າຄືພຣະບຸດຂອງພຣະບິດາຜູ້ສະຖິດນິລັນດອນ, ແລະ ພຣະຜູ້ຊ່ວຍໃຫ້ລອດຂອງໂລກ, **1 ນຟ** 13:40 (1 ນຟ 11:21). ຈົ່ງທູນຂໍຕໍ່ພຣະບິດາຢ່າງສຸດກຳລັງໃນພຣະນາມຂອງພຣະເຢຊູ ເພື່ອທ່ານອາດຈະຖືກເຮັດໃຫ້ສະອາດດ້ວຍໂລຫິດຂອງພຣະເມສານ້ອຍ, **ມມ** 9:6 (ພນມ 7:14; ແອວ 34:36).

ບຸດມະນຸດເປັນພຣະເມສານ້ອຍທີ່ຖືກປະຫານນັບແຕ່ການວາງຮາກຖານຂອງໂລກ, **ມຊ** 7:47.

**ພຣະເມຊີອາ.** *ເບິ່ງ* ຜູ້ທີ່ໄດ້ຖືກເຈີມໄວ້; ພຣະເຢຊູຄຣິດ *ນຳອີກ*

ຄຳສັບພາສາອາຣັບ ແລະ ເຮັບເຣີ ຊຶ່ງໝາຍຄວາມວ່າ "ຜູ້ຖືກເຈີມໄວ້." ໃນພຣະຄຳພີໃໝ່ພຣະເຢຊູ ຖືກເອີ້ນວ່າ ພຣະຄຣິດ, ຊຶ່ງເປັນພາສາກຣີກ ທີ່ເທົ່າກັບຄຳວ່າ *ພຣະເມຊີອາ.* ໝາຍເຖິງສາດສະດາ, ປະໂລຫິດ, ກະສັດ, ແລະ ຜູ້ປົດປ່ອຍທີ່ໄດ້ຖືກເຈີມໄວ້ ຜູ້ທີ່ຊາວຢິວໄດ້ຄອຍຖ້າດ້ວຍຄວາມກະຕືລືລົ້ນ.

ຊາວຢິວຫລາຍຄົນພຽງແຕ່ຊອກຫາຜູ້ປົດປ່ອຍຈາກອຳນາດຂອງຊາວໂຣມ ແລະ ຊອກຫາຄວາມຮຸ່ງເຮືອງຫລາຍກວ່າຂອງປະເທດຊາດເທົ່ານັ້ນ; ດັ່ງນັ້ນ ເມື່ອພຣະເມຊີອາສະເດັດມາ, ຜູ້ນຳ ແລະ ຫລາຍຄົນໄດ້ປະຕິເສດພຣະອົງ. ພຽງແຕ່ຄົນທີ່ຖ່ອມຕົວ ແລະ ຊື່ສັດເທົ່ານັ້ນ ທີ່ສາມາດເຫັນໃນຕົວພຣະເຢຊູແຫ່ງນາຊາເຣັດ ວ່າເປັນພຣະຄຣິດທີ່ແທ້ຈິງ (ອຊຢ 53; ມທ 16:16; ຢຮ 4:25–26).

ພຣະເມຊີອາຈະມີພຣະວິນຍານ, ສັ່ງສອນພຣະກິດຕິຄຸນ, ແລະ ປະກາດເສລີພາບ, **ອຊຢ** 61:1–3 (ລກ 4:18–21).

ເຮົາໄດ້ພົບພຣະເມຊີອາແລ້ວ ຊຶ່ງແປວ່າພຣະຄຣິດ, **ຢຮ** 1:41 (ຢຮ 4:25–26).

ພຣະເຈົ້າຈະລ້ຽງຄົນຜູ້ໜຶ່ງໃຫ້ເປັນພຣະເມຊີອາໃນບັນດາຊາວຢິວ, ຫລື ອີກຄຳໜຶ່ງເອີ້ນວ່າ, ພຣະຜູ້ຊ່ວຍໃຫ້ລອດ, **1 ນຟ** 10:4. ພຣະບຸດຂອງພຣະເຈົ້າຄື ພຣະເມຊີອາ ຜູ້ທີ່ຈະສະເດັດມາ, **1 ນຟ** 10:17. ການໄຖ່ຈຶ່ງມາເຖິງໂດຍຜ່ານທາງພຣະເມຊີອາຜູ້ບໍລິສຸດ, **2 ນຟ** 2:6. ພຣະເມຊີອາຈະສະເດັດມາໃນຄວາມສົມບູນແຫ່ງເວລາ, **2 ນຟ** 2:26. ພຣະເມຊີອາຈະລຸກຂຶ້ນຈາກຄວາມຕາຍ, **2 ນຟ** 25:14.

ໃນພຣະນາມຂອງພຣະເມຊີອາ ຂ້າພະເຈົ້າຂໍມອບຖານະປະໂລຫິດແຫ່ງອາໂຣນ, **ຄພ** 13.

ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, ເຮົາຄືພຣະເມຊີອາ, ກະສັດແຫ່ງຊີໂອນ, **ມຊ** 7:53.

**ພຣະເຢຊູຄຣິດ.** *ເບິ່ງ* ກັບໃຈ, ການກັບໃຈ; ການຕົກຂອງອາດາມ ແລະ ເອວາ; ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ການສະເດັດຂຶ້ນສະຫວັນ; ການປ່ຽນສະພາບ—ການປ່ຽນສະພາບຂອງພຣະຄຣິດ; ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ຄຶງ, ການຄຶງ; ໂຄລະໂຄທາ; ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ງູທອງ; ເຈົ້າບ່າວ; ສັດທາ; ສ້າງ, ການສ້າງ; ສິນລະລຶກ; ເສຍສະລະ, ການ

ເສຍສະລະ; ສຳນຶກ, ຄວາມສຳນຶກ; ຊົດໃຊ້, ການຊົດໃຊ້; ຕອນຕົ້ນ; ໄຖ່, ການໄຖ່, ຖືກໄຖ່; ທີ່ຖືກຳເນີດ; ເທດສະໜາຢູ່ໂນນພູ; ນ້ຳທີ່ປະກອບດ້ວຍຊີວິດ; ບຸດມະນຸດ; ບໍ່ມີທີ່ສຸດ; ປົດບາບ, ການປົດບາບ; ຜູ້ທີ່ໄດ້ຖືກເຈີມໄວ້; ຜູ້ລ້ຽງທີ່ດີ; ແຜນແຫ່ງການໄຖ່; ພຣະຄຸນ; ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະທຳ; ພຣະຜູ້ຊ່ວຍໃຫ້ລອດ; ພຣະຜູ້ໄຖ່; ພຣະຜູ້ເປັນກາງ; ພຣະຜູ້ເປັນເຈົ້າ; ພຣະຜູ້ປົດປ່ອຍ; ພຣະຜູ້ປອບໂຍນ; ພຣະເມສານ້ອຍຂອງພຣະເຈົ້າ; ພຣະເມຊີອາ; ມາຣີ, ມານດາຂອງພຣະເຢຊູ; ໄມ້ກາງແຂນ; ເຢໂຮວາ; ລູກກົກ; ເລືອດ, ໂລຫິດ; ວິງວອນແທນ, ຜູ້ວິງວອນແທນ; ວິທີທາງ; ຫີນ; ຫີນເສົາເອກ; ອາລະຟາ ແລະ ໂອເມຄາ; ອາຫານທິບແຫ່ງຊີວິດ; ເອມານູເອນ; ເຮົາເປັນ *ນຳອີກ*

*ພຣະຄຣິດ* (ພາສາກຣີກ) ແລະ *ພຣະເມຊີອາ* (ພາສາເຮັບເຣີ) ໝາຍເຖິງ "ຜູ້ທີ່ຖືກເຈີມ." ພຣະເຢຊູຄຣິດ ເປັນລູກກົກທາງວິນຍານຂອງພຣະບິດາ (ຣຣ 1:6; ຄພ 93:21). ພຣະອົງເປັນພຣະອົງດຽວທີ່ຖືກຳເນີດຈາກພຣະບິດາໃນເນື້ອໜັງ (ຢຮ 1:14; 3:16). ພຣະອົງເປັນພຣະເຢໂຮວາ (ຄພ 110:3–4) ແລະ ໄດ້ຮັບການແຕ່ງຕັ້ງລ່ວງໜ້າຕໍ່ການເອີ້ນທີ່ຍິ່ງໃຫຍ່ຂອງພຣະອົງກ່ອນການສ້າງໂລກ. ພາຍໃຕ້ການຊີ້ນຳຂອງພຣະບິດາ, ພຣະເຢຊູໄດ້ສ້າງແຜ່ນດິນໂລກ ແລະ ທຸກສິ່ງທີ່ຢູ່ໃນນັ້ນ (ຢຮ 1:3, 14; ມຊ 1:31–33). ພຣະອົງໄດ້ມາກຳເນີດນຳນາງມາຣີໃນເບັດເລເຮັມ, ໄດ້ໃຊ້ຊີວິດທີ່ປາດສະຈາກບາບ, ແລະ ໄດ້ທຳການຊົດໃຊ້ທີ່ດີເລີດແທນບາບຂອງມະນຸດຊາດທັງປວງ ໂດຍການຫລັ່ງໂລຫິດ ແລະ ປະທານຊີວິດຢູ່ເທິງໄມ້ກາງແຂນ (ມທ 2:1; 1 ນຟ 11:13–33; 3 ນຟ 27:13–16; ຄພ 76:40–42). ພຣະອົງໄດ້ຟື້ນຄືນພຣະຊົນ, ດັ່ງນັ້ນຈຶ່ງເປັນສິ່ງປະກັນວ່າມະນຸດຊາດທັງປວງກໍຈະຟື້ນຄືນຊີວິດຄືກັນ. ຜ່ານການຊົດໃຊ້ ແລະ ການຟື້ນຄືນພຣະຊົນຂອງພຣະເຢຊູ, ຜູ້ທີ່ກັບໃຈຈາກບາບຂອງຕົນ ແລະ ເຊື່ອຟັງຕໍ່ພຣະບັນຍັດຂອງພຣະເຈົ້າ ຈະສາມາດອາໄສຢູ່ນຳພຣະເຢຊູ ແລະ ພຣະບິດາຕະຫລອດການ (2 ນຟ 9:10–12; 21–22; ຄພ 76:50–53, 62).

ພຣະເຢຊູຄຣິດເປັນພຣະຜູ້ຍິ່ງໃຫຍ່ ທີ່ໄດ້ມາເກີດຢູ່ໃນໂລກນີ້. ຊີວິດຂອງພຣະອົງເປັນຕົວຢ່າງທີ່ດີເລີດ ເຖິງວິທີທີ່ມະນຸດຊາດທັງປວງຄວນດຳລົງຊີວິດ. ຄຳອະທິຖານ, ພອນ, ແລະ ພິທີການຂອງຖານະປະໂລຫິດທັງໝົດ ຄວນເປັນໄປໃນພຣະນາມຂອງພຣະອົງ. ພຣະອົງເປັນພຣະຜູ້ເປັນເຈົ້າຂອງບັນດາພຣະຜູ້ເປັນເຈົ້າທັງຫລາຍ, ເປັນມະຫາກະສັດຂອງບັນດາກະສັດທັງຫລາຍ, ເປັນພຣະຜູ້ສ້າງ, ເປັນພຣະຜູ້ຊ່ວຍໃຫ້ລອດ, ແລະ ເປັນພຣະເຈົ້າຂອງທັງແຜ່ນດິນໂລກ.

ພຣະເຢຊູຄຣິດຈະສະເດັດມາອີກໃນອຳນາດ ແລະ ລັດສະໝີພາບ ເພື່ອປົກຄອງຢູ່ເທິງແຜ່ນດິນໂລກ ໃນໄລຍະພັນປີ. ໃນວັນສຸດທ້າຍ, ພຣະອົງຈະພິພາກສາມະນຸດຊາດທັງປວງ (ແອວ 11:40–41; ຈສ—ມ 1).

*ການສະຫລຸບພຣະຊົນຊີບຂອງພຣະອົງ (ໃນລຳດັບຂອງເຫດການທີ່ເກີດຂຶ້ນ):* ການກຳເນີດ ແລະ ພາລະກິດຂອງພຣະເຢຊູໄດ້ຖືກບອກໄວ້ລ່ວງໜ້າ, **ລກ** 1:26–38 (ອຊຢ 7:14; 9:6–7; 1 ນຟ 11). ໄດ້ກຳເນີດ, **ລກ** 2:1–7 (ມທ 1:18–25). ໄດ້ຮັບພິທີຕັດ, **ລກ** 2:21. ໄດ້ຖືກນຳໄປຖວາຍທີ່ພຣະວິຫານ, **ລກ** 2:22–38. ພວກໂຫລາຈານໄດ້ມາຢ້ຽມຢາມ, **ມທ** 2:1–12. ໂຢເຊັບ ແລະ ນາງມາຣີໄດ້ພາພຣະອົງໜີໄປຫາປະເທດເອຢິບ, **ມທ** 2:13–18. ໄດ້ຖືກພາໄປຫາເມືອງນາຊາເຣັດ, **ມທ** 2:19–23. ໄດ້ໄປຢ້ຽມຢາມພຣະວິຫານຕອນມີອາຍຸໄດ້ສິບສອງພັນສາ, **ລກ** 2:41–50. ມີນ້ອງຊາຍ ແລະ ນ້ອງສາວ, **ມທ** 13:55–56 (ມຣກ 6:3). ໄດ້ຮັບບັບຕິສະມາ, **ມທ** 3:13–17 (ມຣກ 1:9–11; ລກ 3:21–22). ໄດ້ຖືກມານພະຍາຍາມລໍ້ລວງ, **ມທ** 4:1–11 (ມຣກ 1:12–13; ລກ 4:1–13). ໄດ້ເອີ້ນເອົາສານຸສິດຂອງພຣະອົງ, **ມທ** 4:18–22 (ມທ 9:9; ມຣກ 1:16–20; 2:13–14; ລກ 5:1–11, 27–28; 6:12–16; ຢຮ 1:35–51). ໄດ້ມອບໝາຍໜ້າທີ່ໃຫ້ອັກຄະສາວົກ, **ມທ** 10:1–4 (ມຣກ 3:13–19; ລກ 6:12–16). ໄດ້

ກ່າວເທດສະໜາຢູ່ໂນນພູ, **ມທ** 5–7. ໄດ້ບອກເຖິງການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຂອງພຣະອົງ, **ມທ** 16:21 (ມທ 17:22–23; 20:17–19; ມຣກ 8:31; 9:30–32; 10:32–34; ລກ 9:22; 18:31–34). ໄດ້ປ່ຽນລັກສະນະພຣະກາຍ, **ມທ** 17:1–9 (ມຣກ 9:2–8; ລກ 9:28–36). ໄດ້ສົ່ງສາວົກເຈັດສິບອອກໄປ, **ລກ** 10:1–20. ໄດ້ສະເດັດເຂົ້າໄປເຢຣູຊາເລັມຢ່າງຜູ້ມີໄຊ, **ມທ** 21:1–11 (ມຣກ 11:1–11; ລກ 19:29–40; ຢຮ 12:12–15). ໄດ້ຈັດຕັ້ງສິນລະລຶກ, **ມທ** 26:26–29 (ມຣກ 14:22–25; ລກ 22:19–20). ໄດ້ຮັບທຸກທໍລະມານ ແລະ ອະທິຖານຢູ່ໃນສວນເຄັດເຊມາເນ, **ມທ** 26:36–46 (ມຣກ 14:32–42; ລກ 22:39–46). ໄດ້ຖືກທໍລະຍົດ, ຖືກຈັບ, ແລະ ຖືກປະຖິ້ມ, **ມທ** 26:47–56 (ມຣກ 14:43–53; ລກ 22:47–54; ຢຮ 18:2–13). ໄດ້ຖືກຄຶງ, **ມທ** 27:31–54 (ມຣກ 15:20–41; ລກ 23:26–28, 32–49; ຢຮ 19:16–30). ໄດ້ຟື້ນຄືນພຣະຊົນ, **ມທ** 28:1–8 (ມຣກ 16:1–8; ລກ 24:1–12; ຢຮ 20:1–10). ໄດ້ມາປະກົດຫລັງຈາກພຣະອົງໄດ້ຟື້ນຄືນພຣະຊົນ, **ມທ** 28:9–20 (ມຣກ 16:9–18; ລກ 24:13–48; ຢຮ 20:11–31; ກຈກ 1:3–8; 1 ກຣທ 15:5–8). ໄດ້ສະເດັດຂຶ້ນໄປສະຫວັນ, **ມຣກ** 16:19–20 (ລກ 24:51–53; ກຈກ 1:9–12).

ໄດ້ມາປະກົດຕໍ່ຊາວນີໄຟ, **3 ນຟ** 11:1–17 (3 ນຟ 11–26).

ໄດ້ມາປະກົດຕໍ່ໂຈເຊັບ ສະມິດ, **ຈສ—ປ** 1:15–20.

*ການທຳນາຍກ່ຽວກັບການກຳເນີດ ແລະ ການສິ້ນພຣະຊົນຂອງພຣະເຢຊູຄຣິດ:* ຍິງສາວຜູ້ໜຶ່ງຈະຖືພາ ແລະ ຈະອອກລູກເປັນຜູ້ຊາຍ, **ອຊຢ** 7:14 (1 ນຟ 11:13–20). ຈະມີຜູ້ປົກຄອງຄົນໜຶ່ງອອກມາຈາກເບັດເລເຮັມສຳລັບຊາດອິດສະຣາເອນ, **ມກ** 5:2.

ຊາມູເອນຄົນເລມັນໄດ້ທຳນາຍເຖິງຄວາມແຈ້ງຂອງມື້ໜຶ່ງ, ຄືນໜຶ່ງ, ແລະ ອີກມື້ໜຶ່ງ; ດາວດວງໃໝ່; ແລະ ເຄື່ອງໝາຍອື່ນໆອີກ, **ຮລມ** 14:2–6. ຊາມູເອນຄົນເລມັນໄດ້ທຳນາຍເຖິງຄວາມມືດ, ຟ້າຮ້ອງ ແລະ ຟ້າແມບເຫລື້ອມ, ແລະ ແຜ່ນດິນໄຫວ, **ຮລມ** 14:20–27. ເຄື່ອງໝາຍຂອງການກຳເນີດຂອງພຣະເຢຊູໄດ້ເກີດເປັນຈິງ, **3 ນຟ** 1:15–21. ເຄື່ອງໝາຍຂອງການສິ້ນພຣະຊົນຂອງພຣະເຢຊູໄດ້ເກີດເປັນຈິງ, **3 ນຟ** 8:5–23.

*ການປະກົດຕົວຂອງພຣະຄຣິດຫລັງຈາກຊີວິດມະຕະ:* ຫລັງຈາກພຣະເຢຊູເປັນຄືນມາຈາກຕາຍແລ້ວ, ພຣະອົງໄດ້ປະກົດແກ່ນາງມາຣີ, **ມຣກ** 16:9 (ຢຮ 20:11–18). ພຣະເຢຊູໄດ້ຍ່າງລົມໄປກັບສານຸສິດສອງຄົນຂອງພຣະອົງຢູ່ໃນເສັ້ນທາງໄປຫາເມືອງເອມາອຸດ, **ລກ** 24:13–34. ພຣະເຢຊູໄດ້ປະກົດແກ່ອັກຄະສາວົກ, ຜູ້ໄດ້ສຳພັດພຣະຫັດ ແລະ ພຣະບາດຂອງພຣະອົງ, **ລກ** 24:36–43 (ຢຮ 20:19–20). ພຣະເຢຊູໄດ້ປະກົດແກ່ໂທມາ, **ຢຮ** 20:24–29. ພຣະເຢຊູໄດ້ປະກົດແກ່ສານຸສິດທີ່ທະເລຕິເບເຣຍ, **ຢຮ** 21:1–14. ພຣະເຢຊູໄດ້ປະຕິບັດສາດສະໜາກິດເປັນເວລາສີ່ສິບມື້ຫລັງຈາກພຣະອົງໄດ້ຟື້ນຄືນພຣະຊົນ, **ກຈກ** 1:2–3. ສະເຕຟາໂນໄດ້ເຫັນພຣະເຢຊູກຳລັງຢືນຢູ່ທາງເບື້ອງຂວາພຣະຫັດຂອງພຣະເຈົ້າ, **ກຈກ** 7:55–56. ພຣະເຢຊູໄດ້ປະກົດແກ່ໂຊໂລ, **ກຈກ** 9:1–8 (ປຈສ, ກຈກ 9:7; ກຈກ 26:9–17). ຜູ້ຄົນຫລາຍກວ່າ 500 ຄົນ ໄດ້ເຫັນພຣະຄຣິດ, **1 ກຣທ** 15:3–8.

ພຣະເຢຊູຄຣິດໄດ້ປະກົດຕົວແກ່ຜູ້ຄົນຂອງນີໄຟ, **3 ນຟ** 11:1–17. ຜູ້ຄົນ 2500 ຄົນໄດ້ເຫັນ ແລະ ໄດ້ຍິນພຣະເຢຊູ, **3 ນຟ** 17:16–25. ພຣະຜູ້ເປັນເຈົ້າໄດ້ມາຢ້ຽມຢາມມໍມອນ, **ມມ** 1:15.

ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນ ໄດ້ເຫັນພຣະເຢຊູຢູ່ທາງເບື້ອງຂວາພຣະຫັດຂອງພຣະເຈົ້າ, **ຄພ** 76:22–23. ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ ໄດ້ເຫັນພຣະຜູ້ເປັນເຈົ້າຢູ່ໃນພຣະວິຫານເຄີດແລນ, **ຄພ** 110:1–4.

ໂຈເຊັບ ສະມິດ ໄດ້ເຫັນພຣະເຢຊູ, **ຈສ—ປ** 1:15–17.

*ການເປັນຢູ່ຂອງພຣະຄຣິດກ່ອນມະຕະ:* ພຣະຜູ້ເປັນເຈົ້າໄດ້ປະກົດແກ່ອັບຣາມ, **ປຖກ** 12:7 (ປຖກ 17:1; 18:1; ອຣຮ 2:6–8). ພຣະ

ຜູ້ເປັນເຈົ້າໄດ້ກ່າວແກ່ໂມເຊໜ້າຕໍ່ໜ້າ, **ອພຍ** 33:11 (ພບຍ 34:10; ມຊ 1:1–2). ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າປະທັບຢືນຢູ່ເທິງແທ່ນບູຊາ, **ອມ** 9:1.

ເມື່ອຕົ້ນເດີມນັ້ນ ພຣະທຳໄດ້ສະຖິດຢູ່ກັບພຣະເຈົ້າ. ພຣະທຳໄດ້ບັງເກີດເປັນມະນຸດ, ແລະ ອາໄສຢູ່ໃນທ່າມກາງເຮົາທັງຫລາຍ, **ຢຮ** 1:1, 14 (1 ຢຮ 1:1–3). ກ່ອນອັບຣາຮາມເກີດ, ເຮົານີ້ກໍເປັນຢູ່ແລ້ວ, **ຢຮ** 8:58. ຂໍໂຜດໃຫ້ຂ້ານ້ອຍມີສະຫງ່າລາສີຢູ່ຊ້ອງໜ້າພຣະອົງເຖີດ ຊຶ່ງຂ້ານ້ອຍໄດ້ມີກັບພຣະອົງກ່ອນສ້າງໂລກນັ້ນ, **ຢຮ** 17:5.

ເອຊາຢາໄດ້ເຫັນພຣະຜູ້ໄຖ່ຂອງຂ້າພະເຈົ້າແທ້ໆ ເໝືອນດັ່ງຂ້າພະເຈົ້າ ແລະ ຢາໂຄບນ້ອງຊາຍຂອງຂ້າພະເຈົ້າໄດ້ເຫັນພຣະອົງ, **2 ນຟ** 11:2–3. ໃນມື້ອື່ນ ເຮົາຈະເຂົ້າມາໃນໂລກ, **3 ນຟ** 1:12–14. ພຣະຄຣິດໄດ້ເປັນຢູ່ກ່ອນໂລກເລີ່ມຕົ້ນ, **3 ນຟ** 26:5 (ຢຮ 6:62). ຄືກັນກັບທີ່ເຮົາປະກົດແກ່ເຈົ້າສັນໃດ ເຮົາຈະປະກົດແກ່ຜູ້ຄົນຂອງເຮົາໃນທາງເນື້ອໜັງສັນນັ້ນ, **ອທ** 3:14–17.

ເອນົກໄດ້ເຫັນພຣະຜູ້ເປັນເຈົ້າ ແລະ ໄດ້ຕິດຕາມພຣະອົງ, **ຄພ** 107:48–49.

ບຸດທີ່ຮັກຂອງເຮົາ, ຊຶ່ງເປັນທີ່ຮັກ ແລະ ທີ່ຖືກເລືອກໄວ້ແລ້ວຂອງເຮົານັບຕັ້ງແຕ່ຕົ້ນ, **ມຊ** 4:2. ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ເຮົາຈະສົ່ງຜູ້ໃດໄປ? ແລະ ຜູ້ໜຶ່ງຊຶ່ງເໝືອນດັ່ງບຸດມະນຸດໄດ້ຕອບວ່າ: ຂ້າພຣະອົງຢູ່ນີ້ເດ, ຂໍຈົ່ງສົ່ງຂ້າພຣະອົງໄປເຖີດ, **ອຣຮ** 3:27.

*ການປົກຄອງຂອງພຣະຄຣິດໃນລະຫວ່າງພັນປີ:* ມີລູກຊາຍຜູ້ໜຶ່ງຖືກມອບໝາຍໃຫ້ໝູ່ເຮົາແລ້ວ, **ອຊຢ** 9:6 (2 ນຟ 19:6). ເຮົາກຳລັງຢູ່ທ່າມກາງໝູ່ເຈົ້າ, ພຣະຜູ້ເປັນເຈົ້າໄດ້ກ່າວ, **ຊກຢ** 2:10–12 (ຊກຢ 14:9).

ພຣະເຈົ້າຈະໃຫ້ພຣະເຢຊູນັ່ງຢູ່ເທິງບັນລັງຂອງກະສັດດາວິດ, **ລກ** 1:30–33. ພຣະຄຣິດຈະປົກຄອງຕະຫລອດຊົ່ວນິລັນດອນ, **ພນມ** 11:15. ໄພ່ພົນຂອງພຣະເຈົ້າຈະຄຸ້ມຄອງຮ່ວມກັບພຣະຄຣິດໃນລະຫວ່າງພັນປີ, **ພນມ** 20:4 (ຄພ 76:63).

ເພາະຄວາມຊອບທຳຂອງຜູ້ຄົນ, ຊາຕານຈຶ່ງບໍ່ມີອຳນາດ, **1 ນຟ** 22:26 (ພນມ 20:1–3).

ເຮົາຈະດຳລົງຢູ່ໃນຄວາມຊອບທຳກັບມະນຸດຢູ່ເທິງແຜ່ນດິນໂລກເປັນເວລາພັນປີ, **ຄພ** 29:11 (ຄພ 43:29–30). ຈົ່ງຂຶ້ນຢູ່ກັບອຳນາດທີ່ດຳລົງຢູ່, ຈົນກວ່າພຣະອົງຈະປົກຄອງ ຜູ້ຊຶ່ງມີສິດທີ່ຈະປົກຄອງ, **ຄພ** 58:22 (1 ກຣທ 15:25).

ພຣະຄຣິດຈະປົກຄອງແຜ່ນດິນໂລກເອງ, **ຫຼຊ** 1:10 (ອຊຢ 32:1).

*ການຮັບເອົາພຣະນາມຂອງພຣະເຢຊູຄຣິດໄວ້ກັບເຮົາ:* ບໍ່ມີນາມອື່ນໃດທົ່ວໃຕ້ຟ້າ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ, **ກຈກ** 4:12 (2 ນຟ 31:21). ພວກອັກຄະສາວົກຊົມຊື່ນຍິນດີ ເພາະພວກເພິ່ນຖືວ່າຕົນເປັນຜູ້ສົມຄວນທີ່ຕ້ອງໝິ່ນປະໝາດເພາະເຫັນແກ່ພຣະນາມຂອງພຣະອົງ, **ກຈກ** 5:38–42. ກົດບັນຍັດຂອງພຣະອົງຄື, ໃຫ້ພວກເຮົາເຊື່ອໃນພຣະນາມຂອງພຣະເຢຊູຄຣິດ ພຣະບຸດຂອງພຣະອົງ, **1 ຢຮ** 3:23.

ເປັນພະຍານວ່າ ພວກທ່ານເຕັມໃຈຮັບເອົາພຣະນາມຂອງພຣະຄຣິດໂດຍການບັບຕິສະມາ, **2 ນຟ** 31:13. ຂ້າພະເຈົ້າຈຶ່ງຢາກໃຫ້ພວກທ່ານຮັບເອົາພຣະນາມຂອງພຣະຄຣິດ, **ມຊຢ** 5:6–12 (ມຊຢ 1:11). ຜູ້ໃດກໍຕາມທີ່ປາດຖະໜາທີ່ຈະຮັບເອົາພຣະນາມຂອງພຣະຄຣິດ ຜູ້ນັ້ນກໍໄດ້ເຂົ້າຮ່ວມກັບສາດສະໜາຈັກຂອງພຣະເຈົ້າ, **ມຊຢ** 25:23. ທຸກຄົນທີ່ເຊື່ອຖືຢ່າງແທ້ຈິງໃນພຣະຄຣິດກໍໄດ້ຍອມຮັບເອົາພຣະນາມຂອງພຣະຄຣິດ, **ແອວ** 46:15. ປະຕູສະຫວັນໄດ້ເປີດໃຫ້ແກ່ທຸກຄົນຜູ້ທີ່ເຊື່ອໃນພຣະນາມຂອງພຣະເຢຊູຄຣິດ, **ຮລມ** 3:28. ຄົນທີ່ຖືກພົບວ່າຊື່ສັດຕໍ່ນາມຂອງເຮົາຍ່ອມເປັນສຸກໃນວັນສຸດທ້າຍ, **ອທ** 4:19. ເຂົາເຕັມໃຈຮັບພຣະນາມຂອງພຣະບຸດ, **ມຣນ** 4:3 (ຄພ 20:77).

ຈົ່ງຮັບເອົາພຣະນາມຂອງພຣະຄຣິດ, **ຄພ** 18:21–25.

*ສິດອຳນາດ:* ມີລູກຊາຍຜູ້ໜຶ່ງຖືກມອບໝາຍໃຫ້ໝູ່ເຮົາແລ້ວ, **ອຊຢ** 9:6 (2 ນຟ 19:6).

ພຣະ ເຢຊູ ໄດ້ ສິດ ສອນ ດ້ວຍ ສິດ ອຳນາດ, **ມທ** 7:28–29 (ມຣກ 1:22). ບຸດມະນຸດມີສິດອຳນາດເທິງແຜ່ນດິນໂລກນີ້ທີ່ຈະອະໄພບາບກຳ, **ມທ** 9:6. ພຣະເຢຊູສັ່ງຜີມານຮ້າຍ ແລະ ມັນກໍຍອມຟັງຄວາມພຣະອົງ, **ມຣກ** 1:27 (ລກ 4:33–36). ພຣະເຢຊູໄດ້ແຕ່ງຕັ້ງອັກຄະສາວົກໃຫ້ມີອຳນາດ, **ມຣກ** 3:14–15. ພຣະເຢຊູສອນດ້ວຍອຳນາດ, **ລກ** 4:32. ພຣະບິດາໄດ້ມອບການພິພາກສາທັງໝົດໃຫ້ແກ່ພຣະບຸດ, **ຢຮ** 5:22, 27. ພຣະເຈົ້າໄດ້ເຈີມພຣະເຢຊູດ້ວຍພຣະວິນຍານບໍລິສຸດ ແລະ ດ້ວຍອຳນາດ, **ກຈກ** 10:38. ພຣະຄຣິດໄດ້ຖືກເລືອກໄວ້ກ່ອນການວາງຮາກຖານຂອງໂລກ, **1 ປຕ** 1:20 (ອທ 3:14). ພຣະຄຣິດຖືລູກກະແຈແຫ່ງຄວາມຕາຍ ແລະ ແດນມໍລະນາ, **ພນມ** 1:18.

ມະນຸດທັງປວງໄດ້ມາຂຶ້ນຢູ່ກັບພຣະຄຣິດ, **2 ນຟ** 9:5. ພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ, ພຣະບິດາແຫ່ງສະຫວັນ ແລະ ແຜ່ນດິນໂລກ, ພຣະຜູ້ສ້າງທຸກສິ່ງຕັ້ງແຕ່ຕົ້ນ, **ຮລມ** 14:12.

ພຣະຄຣິດໄດ້ມາຕາມພຣະປະສົງຂອງພຣະບິດາ, **ຄພ** 19:24. ພຣະເຢຊູໄດ້ຮັບຄວາມສົມບູນແຫ່ງລັດສະໝີພາບຂອງພຣະບິດາ; ແລະ ພຣະອົງໄດ້ຮັບອຳນາດທັງໝົດ, **ຄພ** 93:3–4, 16–17 (ຢຮ 3:35–36).

*ຕົວຢ່າງຂອງພຣະເຢຊູຄຣິດ:* ເຮົາໄດ້ວາງແບບຢ່າງໄວ້ໃຫ້ພວກເຈົ້າແລ້ວ, **ຢຮ** 13:15. ເຮົານີ້ແຫລະເປັນທາງນັ້ນ, ເປັນຄວາມຈິງ, ແລະ ເປັນຊີວິດ, **ຢຮ** 14:6. ພຣະຄຣິດໄດ້ທົນທຸກທໍລະມານແທນເຮົາທັງຫລາຍເໝືອນກັນ, ໂດຍໃຫ້ເປັນແບບຢ່າງແກ່ພວກເຮົາ, ເພື່ອພວກເຮົາຈະໄດ້ຕິດຕາມຮອຍພຣະບາດຂອງພຣະອົງ, **1 ປຕ** 2:21.

ນອກຈາກມະນຸດຈະທຳຕາມຕົວຢ່າງຂອງພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ເຂົາຈະລອດບໍ່ໄດ້, **2 ນຟ** 31:16. ເຮົາຈຶ່ງຢາກໃຫ້ເຈົ້າດີພ້ອມຄືກັນກັບເຮົາ, **3 ນຟ** 12:48. ສິ່ງນີ້ເຈົ້າຕ້ອງຍຶດຖືປະຕິບັດສະເໝີດັ່ງທີ່ເຮົາໄດ້ເຮັດ, **3 ນຟ** 18:6. ເຮົາໄດ້ເຮັດເປັນຕົວຢ່າງໄວ້ໃຫ້ເຈົ້າແລ້ວ, **3 ນຟ** 18:16. ວຽກງານທີ່ເຈົ້າໄດ້ເຫັນເຮົາເຮັດມາແລ້ວ ສິ່ງນັ້ນເຈົ້າຈົ່ງເຮັດຕາມເໝືອນກັນ, **3 ນຟ** 27:21, 27. ຜູ້ຕິດຕາມທີ່ແທ້ຈິງຂອງພຣະເຢຊູຄຣິດຈະເປັນເໝືອນດັ່ງພຣະອົງ, **ມຣນ** 7:48.

*ປະຈັກພະຍານເຖິງພຣະເຢຊູຄຣິດ:* ໂປໂລໄດ້ເປັນພະຍານວ່າພຣະເຢຊູຄືພຣະຄຣິດ, **ກຈກ** 18:5. ແມ່ນແຕ່ຜີມານຮ້າຍກໍຍັງເປັນພະຍານວ່າພວກມັນຮູ້ຈັກພຣະເຢຊູ, **ກຈກ** 19:15. ບໍ່ມີຜູ້ໃດດອກອາດເວົ້າໄດ້ວ່າ ພຣະເຢຊູຄືພຣະຜູ້ເປັນເຈົ້າ ເວັ້ນໄວ້ແຕ່ຜູ້ທີ່ກ່າວໂດຍພຣະວິນຍານບໍລິສຸດ, **1 ກຣທ** 12:3. ທຸກຫົວເຂົ່າຈະຄຸເຂົ່າລົງ ແລະ ທຸກລີ້ນຈະຍອມຮັບວ່າ ພຣະເຢຊູຄຣິດຄືພຣະຜູ້ເປັນເຈົ້າ, **ຟລປ** 2:10–11.

ພວກເຮົາເວົ້າເຖິງພຣະຄຣິດ, ພວກເຮົາປິຕິຍິນດີໃນພຣະຄຣິດ, ພວກເຮົາສັ່ງສອນເລື່ອງພຣະຄຣິດ, ພວກເຮົາທຳນາຍເຖິງພຣະຄຣິດ, **2 ນຟ** 25:26. ພຣະຄຳພີມໍມອນຈະເຮັດໃຫ້ຊາວຢິວ ແລະ ຄົນຕ່າງຊາດຮັບຮູ້ວ່າ ພຣະເຢຊູຄືພຣະຄຣິດ, **2 ນຟ** 26:12 (ໜ້າວິເຄາະສະບັບຂອງພຣະຄຳພີມໍມອນ). ບັນດາສາດສະດາ ແລະ ພຣະຄຳພີເປັນພະຍານເຖິງພຣະຄຣິດ, **ຢຄ** 7:11, 19. ສະແຫວງຫາພຣະເຢຊູອົງນີ້ ຜູ້ຊຶ່ງສາດສະດາ ແລະ ອັກຄະສາວົກໄດ້ຂຽນໄວ້, **ອທ** 12:41.

ພວກເຮົາໄດ້ເຫັນພຣະອົງ ແລະ ໄດ້ຍິນສຸລະສຽງກ່າວເປັນພະຍານວ່າ ພຣະອົງເປັນພຣະອົງດຽວທີ່ຖືກກຳເນີດ, **ຄພ** 76:20–24. ນີ້ຄືຊີວິດນິລັນດອນ—ທີ່ຈະຮູ້ຈັກພຣະເຈົ້າ ແລະ ພຣະເຢຊູຄຣິດ, **ຄພ** 132:24.

ພວກເຮົາເຊື່ອໃນພຣະເຈົ້າ, ພຣະບິດາຜູ້ສະຖິດນິລັນດອນ, ແລະ ໃນພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, **ຫຼຊ** 1:1. ພວກເຮົາເຊື່ອວ່າ ພຣະຄຣິດຈະປົກຄອງແຜ່ນດິນໂລກເອງ, **ຫຼຊ** 1:10.

*ປະມຸກຂອງສາດສະໜາຈັກ:* ພຣະຄຣິດເປັນປະມຸກຂອງສາດສະໜາຈັກ, **ອຟຊ** 5:23 (ອຟຊ 1:22; 4:15). ພຣະອົງເປັນຫົວຂອງກາຍ, ຄືສາດສະໜາຈັກ, **ກລຊ** 1:18.

ນີ້ແມ່ນສາດສະໜາຈັກຂອງເຮົາ, **ມຊຢ**

26:22 (ມຊຢ 27:13). ພຣະຄຣິດເປັນຜູ້ສ້າງ ແລະ ເປັນຜູ້ເຮັດໃຫ້ສັດທາຂອງເຂົາສົມບູນ, **ມຣນ** 6:1–4.

ສາດສະໜາຈັກນີ້ ເຮົາໄດ້ສະຖາປະນາມັນຂຶ້ນ, **ຄພ** 33:5 (3 ນຟ 27:3–8).

*ພິພາກສາ:* ພຣະອົງຈະຕັດສິນບັນດາຊົນຊາດຢ່າງຍຸດຕິທຳ, **ພສສ** 9:8 (3 ນຟ 27:16). ພຣະອົງຈະປົກຄອງຄົນທຸກຊາດທຸກພາສາ, **ພສສ** 96:13. ພຣະເຈົ້າຈະຕັດສິນຄົນຊອບທຳ ແລະ ຄົນຊົ່ວຊ້າ, **ປຍຈ** 3:17. ພຣະອົງຈະຕັດສິນໃນທ່າມກາງຊົນຊາດທັງຫລາຍ, **ອຊຢ** 2:4 (ມກ 4:3; 2 ນຟ 12:4). ພຣະອົງຈະຕັດສິນຄົນທຸກລຳບາກຢ່າງຍຸດຕິທຳ, **ອຊຢ** 11:2–4.

ພຣະບິດາໄດ້ມອບການພິພາກສາທັງໝົດໃຫ້ແກ່ພຣະບຸດ, **ຢຮ** 5:22. ແຕ່ເຖິງແມ່ນເຮົາຕັດສິນ, ການຕັດສິນຂອງເຮົາກໍຖືກຕ້ອງ, **ຢຮ** 8:16. ພຣະເຈົ້າໄດ້ແຕ່ງຕັ້ງພຣະອົງໄວ້ໃຫ້ເປັນຜູ້ພິພາກສາທັງຄົນເປັນ ແລະ ຄົນຕາຍ, **ກຈກ** 10:42 (2 ຕມທ 4:1). ພຣະເຈົ້າຈະໃຫ້ພຣະເຢຊູຄຣິດພິພາກສາຄວາມເລິກລັບໃນໃຈຂອງມະນຸດທັງຫລາຍ, **ຣມ** 2:16. ພວກເຮົາທຸກຄົນຈະຕ້ອງຢືນຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ, **ຣມ** 14:10 (2 ກຣທ 5:10; ແອວ 12:12; ມມ 3:20; 7:6; ອທ 12:38; ຄພ 135:5).

ມະນຸດທັງປວງຍ່ອມມາຫາພຣະເຈົ້າ ເພື່ອຮັບການພິພາກສາຂອງພຣະອົງ ຕາມຄວາມຈິງ ແລະ ຄວາມບໍລິສຸດ ຊຶ່ງມີຢູ່ໃນພຣະອົງ, **2 ນຟ** 2:10. ຢືນຢູ່ຕໍ່ພຣະພັກຂອງພຣະເຈົ້າ ເພື່ອຮັບການພິພາກສາຕາມການກະທຳ, **ແອວ** 5:15 (ແອວ 12:15; 33:22; 3 ນຟ 27:14).

ພຣະເຈົ້າ ແລະ ພຣະຄຣິດເປັນຜູ້ພິພາກສາ, **ຄພ** 76:68.

*ລັດສະໝີພາບຂອງພຣະເຢຊູຄຣິດ:* ລັດສະໝີພາບຂອງພຣະຜູ້ເປັນເຈົ້າເຕັມຢູ່ໃນສະຖານທີ່ນະມັດສະການ, **ອພຍ** 40:34–38. ສະຫງ່າລາສີຂອງພຣະອົງຈະແຜ່ກະຈາຍໄປທົ່ວໂລກ, **ອຊຢ** 6:3 (2 ນຟ 16:3). ລັດສະໝີພາບຂອງພຣະຜູ້ເປັນເຈົ້າຈະສ່ອງໃສ່ເຈົ້າ, **ອຊຢ** 60:1–2.

ບຸດມະນຸດຈະມາປະກົດດ້ວຍສະຫງ່າລາສີແຫ່ງພຣະບິດາຂອງພຣະອົງ, **ມທ** 16:27. ຂໍໂຜດໃຫ້ຂ້ານ້ອຍມີສະຫງ່າລາສີຢູ່ຊ້ອງໜ້າພຣະອົງກ່ອນສ້າງໂລກນັ້ນ, **ຢຮ** 17:5.

ພຣະຜູ້ບໍລິສຸດຂອງອິດສະຣາເອນຈະປົກຄອງດ້ວຍລັດສະໝີພາບອັນຍິ່ງໃຫຍ່, **1 ນຟ** 22:24. ພວກເຮົາມີຄວາມຫວັງໃນລັດສະໝີພາບຂອງພຣະອົງ, **ຢຄ** 4:4. ພຣະບຸດຂອງພຣະເຈົ້າຈະສະເດັດມາດ້ວຍລັດສະໝີພາບຂອງພຣະອົງ, **ແອວ** 5:50. ພຣະອົງໄດ້ຊີ້ແຈງເລື່ອງທັງໝົດຕັ້ງແຕ່ຕົ້ນຈົນເຖິງເວລາທີ່ພຣະອົງຈະສະເດັດມາໃນລັດສະໝີພາບຂອງພຣະອົງ, **3 ນຟ** 26:3.

ອັກຄະສາວົກຂອງເຮົາຈະຢືນຢູ່ດ້ວຍເສື້ອຄຸມແຫ່ງຄວາມຊອບທຳ ເໝືອນດັ່ງທີ່ເຮົາເປັນ, **ຄພ** 29:12 (ຄພ 45:44). ພວກເຮົາໄດ້ເຫັນລັດສະໝີພາບຂອງພຣະບຸດ, ຢູ່ທາງຂວາພຣະຫັດຂອງພຣະບິດາ, **ຄພ** 76:19–23. ໂຢຮັນໄດ້ເຫັນ ແລະ ເປັນພະຍານເຖິງຄວາມສົມບູນແຫ່ງລັດສະໝີພາບຂອງເຮົາ, **ຄພ** 93:6 (ຢຮ 1:14). ພຣະພັກຂອງພຣະອົງຮຸ່ງເຫລື້ອມແຈ້ງກວ່າຄວາມສະຫວ່າງຂອງດວງຕາເວັນ, **ຄພ** 110:3.

ລັດສະໝີພາບຂອງພຣະອົງໄດ້ຢູ່ນຳຂ້າພະເຈົ້າ; ແລະ ຂ້າພະເຈົ້າໄດ້ເຫັນພຣະພັກຂອງພຣະອົງ, **ມຊ** 1:1–11. ນີ້ແມ່ນວຽກງານ ແລະ ລັດສະໝີພາບຂອງເຮົາ, **ມຊ** 1:39.

*ຮູບແບບ ຫລື ເຄື່ອງໝາຍເຖິງພຣະຄຣິດ:* ອາເບັນໄດ້ເອົາລູກແກະເຖິກທົ່ວປີໄປຖວາຍ, **ປຖກ** 4:4 (ມຊ 5:20). ໃຫ້ເອົາອີຊາກລູກຊາຍຄົນດຽວຂອງເຈົ້າໄປນຳ, ແລະ ມອບລາວເປັນເຄື່ອງຖວາຍ, **ປຖກ** 22:1–13 (ຢຄ 4:5). ພຣະຜູ້ເປັນເຈົ້າໄດ້ບັນຊາລູກຫລານຂອງອິດສະຣາເອນໃຫ້ເອົາລູກແກະທີ່ບໍ່ມີບ່ອນຕຳໜິມາເປັນເຄື່ອງຖວາຍ, **ອພຍ** 12:5, 21, 46 (ຈບຊ 9:12; ຢຮ 1:29; 19:33; 1 ປຕ 1:19; ພມມ 5:6). ນີ້ແມ່ນອາຫານທິບ ຊຶ່ງພຣະຜູ້ເປັນເຈົ້າໃຫ້ພວກເຈົ້າກິນ, **ອພຍ** 16:2–15 (ຢຮ 6:51). ຈົ່ງໃຊ້ໄມ້ເທົ້າຂອງເຈົ້າຕີໂງ່ນຫີນ ແລະ ນ້ຳກໍຈະໄຫລອອກມາໃຫ້ປະຊາຊົນດື່ມ, **ອພຍ** 17:6

(ຢຣ 4:6–14; 1 ກຣທ 10:1–4). ໂຕແບ້ຈະຮັບແບກການບາບທັງໝົດຂອງພວກເຂົາ, **ລລວ** 16:20–22 (ອຊຢ 53:11; ມຊຢ 14:11; 15:6–9). ໂມເຊໄດ້ຍົກຫລັກທີ່ມີງູທອງເຫລືອງຕິດໄວ້ຂຶ້ນ ເພື່ອຊ່ວຍກູ້ຊີວິດຜູ້ທີ່ຫລຽວເບິ່ງມັນ, **ຈບຊ** 21:8–9 (ຢຣ 3:14–15; ແອວ 33:19; ຮລມ 8:14–15). ໂຢນາໄດ້ຢູ່ໃນທ້ອງປາເປັນເວລາສາມມື້ສາມຄືນ, **ຢນ** 1:17 (ມທ 12:40).

ສິ່ງນີ້ເປັນລັກສະນະດຽວກັນກັບການເສຍສະລະຂອງພຣະອົງດຽວທີ່ຖືກກຳເນີດຈາກພຣະບິດາ, **ມຊ** 5:4–8.

**ພຣະວາຈາແຫ່ງປັນຍາ**

ກົດສຳລັບສຸຂະພາບທີ່ພຣະຜູ້ເປັນເຈົ້າໄດ້ເປີດເຜີຍ ເພື່ອຜົນປະໂຫຍດທາງຮ່າງກາຍ ແລະ ທາງວິນຍານ ຂອງໄພ່ພົນຂອງພຣະເຈົ້າ (ຄພ 89). ໂດຍທົ່ວໄປແລ້ວ ມັນຖືກກ່າວເຖິງວ່າເປັນ ພຣະວາຈາແຫ່ງປັນຍາ. ພຣະຜູ້ເປັນເຈົ້າໄດ້ສອນຜູ້ຕິດຕາມພຣະອົງສະເໝີ ກ່ຽວກັບຫລັກທຳເລື່ອງສຸຂະພາບ. ພຣະຜູ້ເປັນເຈົ້າໄດ້ເປີດເຜີຍຕໍ່ໂຈເຊັບ ສະມິດ ກ່ຽວກັບອາຫານຊະນິດໃດທີ່ຄວນກິນ ແລະ ຊະນິດໃດທີ່ຄວນຫລີກລ້ຽງ, ພ້ອມດ້ວຍຄຳສັນຍາທີ່ຈະປະທານພອນໃຫ້ ສຳລັບຮ່າງກາຍ ແລະ ວິນຍານ ໃນການເຊື່ອຟັງຕໍ່ພຣະວາຈາແຫ່ງປັນຍາ.

ຢ່າດື່ມເຫລົ້າອະງຸ່ນ ຫລື ເຫລົ້າປຸກ, **ລລວ** 10:9. ຄົນໂງ່ຈ້າອັບປັນຍາທີ່ປ່ອຍຕົນໃຫ້ເມົາເຫລົ້າ, **ສພສ** 20:1. ບໍ່ມີຜູ້ໃດຊົມຊື່ນຍ້ອນໄດ້ຊີມລົດເຫລົ້າ, **ອຊຢ** 24:9. ດານີເອນໄດ້ຕັດສິນໃຈວ່າຈະບໍ່ໃຫ້ຕົນເອງເປັນມົນທິນ ຍ້ອນກິນອາຫານ ແລະ ເຫລົ້າອະງຸ່ນຂອງກະສັດ, **ດນອ** 1:8.

ຖ້າ ຜູ້ ໃດ ທຳ ລາຍ ວິຫານ ຂອງ ພຣະ ເຈົ້າ, ພຣະເຈົ້າກໍຈະທຳລາຍຜູ້ນັ້ນ, **1 ກຣທ** 3:16–17. ຄົນຂີ້ເຫລົ້າຈະບໍ່ມີສ່ວນໃນອານາຈັກຂອງພຣະເຈົ້າ, **1 ກຣທ** 6:10 (ຄລຕ 5:21).

ຜູ້ໃດກໍຕາມທີ່ສັ່ງຫ້າມວ່າ ມະນຸດບໍ່ຄວນກິນຊີ້ນ ບໍ່ໄດ້ຮັບການແຕ່ງຕັ້ງຈາກພຣະເຈົ້າ, **ຄພ** 49:18–21. ທຸກສິ່ງຊຶ່ງເກີດຈາກແຜ່ນດິນໂລກໄດ້ຖືກສ້າງຂຶ້ນເພື່ອໃຫ້ໃຊ້ສອຍ, ບໍ່ໃຫ້ເກີນຂອບເຂດ, **ຄພ** 59:20. ພຣະຜູ້ເປັນເຈົ້າໄດ້ແນະນຳໄພ່ພົນຂອງພຣະເຈົ້າ ບໍ່ໃຫ້ໃຊ້ເຫລົ້າອະງຸ່ນ, ເຫລົ້າປຸກ, ຢາດູດ, ແລະ ເຄື່ອງດື່ມຮ້ອນ, **ຄພ** 89:1–9. ສະໝຸນໄພ, ໝາກໄມ້, ຊີ້ນ, ແລະ ເມັດພືດຖືກກຳນົດໄວ້ເພື່ອຜົນປະໂຫຍດຂອງມະນຸດ ແລະ ສັດສາວາສິ່ງ, **ຄພ** 89:10–17. ການເຊື່ອຟັງກົດພຣະວາຈາແຫ່ງປັນຍາຈະນຳພອນຝ່າຍໂລກ ແລະ ຝ່າຍວິນຍານມາໃຫ້, **ຄພ** 89:18–21.

**ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.** *ເບິ່ງ* ຂອງປະທານສັກສິດ; ສະຖານທີ່ນະມັດສະການ; ສັກສິດທີ່ສຸດ; ພິທີການ *ບຳອິກ*

ຕາມຈິງແລ້ວ ເປັນບ້ານຂອງພຣະຜູ້ເປັນເຈົ້າ. ພຣະຜູ້ເປັນເຈົ້າໄດ້ບັນຊາຜູ້ຄົນຂອງພຣະອົງສະເໝີ ໃຫ້ສ້າງພຣະວິຫານ, ເປັນອາຄານທີ່ສັກສິດ ຊຶ່ງໃນນັ້ນໄພ່ພົນທີ່ມີຄ່າຄວນຂອງພຣະເຈົ້າ ໄດ້ປະຕິບັດພິທີສະຫລອງ ຫລື ພິທີການຂອງພຣະກິດຕິຄຸນສຳລັບຕົນເອງ ແລະ ສຳລັບຜູ້ທີ່ໄດ້ລ່ວງລັບໄປແລ້ວ. ພຣະຜູ້ເປັນເຈົ້າໄດ້ມາຢ້ຽມຢາມພຣະວິຫານຂອງພຣະອົງ, ແລະ ອາຄານເຫລົ່ານີ້ເປັນອາຄານທີ່ສັກສິດ ຫລາຍກວ່າສະຖານທີ່ນະມັດສະການແຫ່ງອື່ນໆທັງໝົດ.

ສະຖານທີ່ນະມັດສະການທີ່ຖືກສ້າງຂຶ້ນໂດຍ ໂມເຊ ແລະ ລູກຫລານຂອງອິດສະຣາເອນ ເປັນພຣະວິຫານທີ່ຍົກຍ້າຍໄປໄດ້. ຊາວອິດສະຣາເອນໄດ້ໃຊ້ມັນໃນລະຫວ່າງການອົບພະຍົບຈາກປະເທດເອຢິບ.

ພຣະວິຫານແຫ່ງທີ່ຮູ້ຈັກກັນດີ ຊຶ່ງກ່າວເຖິງໃນພຣະຄຳພີເດີມ ແມ່ນພຣະວິຫານຫລັງທີ່ໄດ້ຖືກສ້າງຂຶ້ນໂດຍ ໂຊໂລໂມນ ໃນເຢຣູຊາເລັມ (2 ຂຄ 2–5). ມັນໄດ້ຖືກທຳລາຍ 600 ປີ ກ່ອນ ຄ.ສ. ໂດຍ ຊາວບາບີໂລນ ແລະ ໄດ້ຖືກສ້ອມແປງຄືນໃໝ່ໂດຍ ເຊຣຸບບາເບນ ປະມານ 70 ປີຕໍ່ມາ (ອຊຣ 1–6). ພາກສ່ວນໜຶ່ງຂອງພຣະວິຫານແຫ່ງນີ້ໄດ້ຖືກເຜົາ 37 ປີ ກ່ອນ ຄ.ສ., ແລະ ຕໍ່ມາເຮໂຣດຜູ້ຍິ່ງໃຫຍ່ ໄດ້ສ້າງມັນຂຶ້ນໃໝ່. ຊາວໂຣມໄດ້ທຳລາຍພຣະວິຫານ ໃນ ຄ.ສ. 70.

ໃນ ພຣະ ຄຳພີມໍມອນ, ຜູ້ຕິດຕາມທີ່ຊອບທຳຂອງພຣະເຈົ້າ ໄດ້ຖືກນຳພາໃຫ້ສ້າງ ແລະ

ນະມັດສະການ ໃນພຣະວິຫານ (2 ນຟ 5:16; ມຊຢ 1:18; 3 ນຟ 11:1). ການສ້າງ ແລະ ການໃຊ້ພຣະວິຫານຢ່າງຖືກຕ້ອງ ເປັນເຄື່ອງໝາຍຂອງພຣະວິຫານທີ່ແທ້ຈິງ ໃນທຸກຍຸກທຸກສະໄໝ, ລວມທັງການຟື້ນຟູສາດສະໜາຈັກຄືນມາໃໝ່ໃນວັນເວລາຂອງເຮົາ. ພຣະວິຫານເຄີດແລນເປັນພຣະວິຫານແຫ່ງທຳອິດ ທີ່ຖືກສ້າງຂຶ້ນ ແລະ ອຸທິດແດ່ພຣະຜູ້ເປັນເຈົ້າ ໃນຍຸກສະໄໝນີ້. ນັບແຕ່ນັ້ນມາ ພຣະວິຫານຫລາຍຕໍ່ຫລາຍແຫ່ງ ໄດ້ຖືກອຸທິດໃນຫລາຍປະເທດຕະຫລອດທົ່ວໂລກ.

ຜູ້ໃດຈະຢືນຢູ່ໃນສະຖານທີ່ ທີ່ສັກສິດ, **ພສສ** 24:3–5. ໃຫ້ພວກເຮົາຂຶ້ນໄປຍັງພຣະວິຫານຂອງພຣະເຈົ້າຂອງຢາໂຄບ, **ອຊຢ** 2:2–3 (ມກ 4:1–2; 2 ນຟ 12:2–3). ພຣະຜູ້ເປັນເຈົ້າຈະມາຍັງພຣະວິຫານຂອງພຣະອົງໃນທັນໃດ, **ມລກ** 3:1 (3 ນຟ 24:1; ຄພ 36:8; 42:36).

ພຣະເຢຊູໄດ້ຊຳລະພຣະວິຫານ, **ມທ** 21:12–16 (ມຣກ 11:15–18; ລກ 19:45–48).

ໄພ່ພົນຂອງພຣະເຈົ້າໄດ້ຖືກບັນຊາໃຫ້ສ້າງພຣະວິຫານຢູ່ລັດມີເຊີຣີ, **ຄພ** 57:3 (ຄພ 84:3–5). ໄດ້ສະຖາປະນາບ້ານຂອງພຣະເຈົ້າ, **ຄພ** 88:119 (ຄພ 109:8). ພຣະຜູ້ເປັນເຈົ້າໄດ້ຕິຕຽນໄພ່ພົນຂອງພຣະເຈົ້າສຳລັບຄວາມລົ້ມເຫລວທີ່ຈະສ້າງພຣະວິຫານ, **ຄພ** 95:1–12. ເຮົາຈະບໍ່ມາຫາພຣະວິຫານທີ່ບໍ່ບໍລິສຸດ, **ຄພ** 97:15–17. ເຮົາໄດ້ຍອມຮັບເອົາບ້ານແຫ່ງນີ້, ແລະ ນາມຂອງເຮົາຈະຢູ່ທີ່ນີ້, **ຄພ** 110:7–8. ຜູ້ຄົນຂອງພຣະຜູ້ເປັນເຈົ້າໄດ້ຖືກບັນຊາສະເໝີ ໃຫ້ສ້າງບ້ານແດ່ພຣະນາມຂອງພຣະອົງ, **ຄພ** 124:39. ວຽກງານອັນຍິ່ງໃຫຍ່ທີ່ຈະຕ້ອງເຮັດໃນພຣະວິຫານແມ່ນຮ່ວມດ້ວຍການຜະນຶກລູກໆເຂົ້າກັບພໍ່ແມ່ຂອງພວກເຂົາ, **ຄພ** 138:47–48. ວຽກງານອັນຍິ່ງໃຫຍ່ໃນຍຸກສຸດທ້າຍ ແມ່ນຮ່ວມດ້ວຍການສ້າງພຣະວິຫານ, **ຄພ** 138:53–54.

**ພຣະວິຫານເຄີດແລນ, ລັດໂອໄຮໂອ (ສະຫະລັດອາເມຣິກາ)**

ພຣະວິຫານແຫ່ງທຳອິດທີ່ສາດສະໜາຈັກໄດ້ສ້າງຂຶ້ນໃນສະໄໝປະຈຸບັນ. ໄພ່ພົນຂອງພຣະເຈົ້າໄດ້ສ້າງມັນຢູ່ໃນເມືອງເຄີດແລນ, ຕາມພຣະບັນຊາຂອງພຣະຜູ້ເປັນເຈົ້າ (ຄພ 94:3–9). ຈຸດປະສົງຢ່າງໜຶ່ງແມ່ນເພື່ອຈັດຫາສະຖານທີ່ໃຫ້ສະມາຊິກທີ່ມີຄ່າຄວນຮັບເອົາອຳນາດ, ສິດອຳນາດ, ແລະ ຄວາມສະຫວ່າງທາງວິນຍານ (ຄພ 109–110). ມັນໄດ້ຖືກອຸທິດ ໃນວັນທີ 27 ເດືອນມີນາ; 1836; ຄຳອະທິຖານການອຸທິດໄດ້ຖືກມອບໃຫ້ແກ່ສາດສະດາໂຈເຊັບ ສະມິດ ໂດຍການເປີດເຜີຍ (ຄພ 109). ພຣະຜູ້ເປັນເຈົ້າໄດ້ປະທານການເປີດເຜີຍທີ່ສຳຄັນຫລາຍຢ່າງ ແລະ ໄດ້ນຳຂໍກະແຈທີ່ຈຳເປັນສຳລັບການຟື້ນຟູໃຫ້ຢູ່ໃນພຣະວິຫານແຫ່ງນີ້ແຫລະ (ຄພ 110; 137). ມັນບໍ່ໄດ້ຖືກໃຊ້ສຳລັບພິທີການທັງໝົດຂອງພຣະວິຫານ ທີ່ມອບໃຫ້ໃນພຣະວິຫານທຸກວັນນີ້.

**ພຣະວິນຍານສັກສິດ.** *ເບິ່ງ* ພຣະວິນຍານບໍລິສຸດ

**ພຣະວິນຍານສັກສິດແຫ່ງຄຳສັນຍາ.** *ເບິ່ງ* ພຣະວິນຍານບໍລິສຸດ *ນຳອີກ*

ພຣະວິນຍານບໍລິສຸດເປັນພຣະວິນຍານສັກສິດແຫ່ງຄຳສັນຍາ (ກຈກ 2:33). ພຣະອົງຢືນຢັນການກະທຳທີ່ຊອບທຳ, ພິທີການ, ແລະ ພັນທະສັນຍາຂອງມະນຸດທີ່ພຣະເຈົ້າຮັບຮູ້. ພຣະວິນຍານສັກສິດແຫ່ງຄຳສັນຍາເປັນພະຍານຕໍ່ພຣະບິດາວ່າ ພິທີການຊ່ວຍໃຫ້ລອດໄດ້ຖືກປະຕິບັດຢ່າງຖືກຕ້ອງ ແລະ ວ່າພັນທະສັນຍາທີ່ພົວພັນກັນໄດ້ຖືກຮັກສາ.

ຜູ້ທີ່ໄດ້ຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ ໄດ້ຮັບທຸກສິ່ງທີ່ພຣະບິດາມີ, **ຄພ** 76:51–60 (ອຟຊ 1:13–14). ພັນທະສັນຍາ ແລະ ການປະຕິບັດທັງໝົດຈະຕ້ອງຖືກຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາເພື່ອຈະມີຜົນຫລັງຈາກຊີວິດນີ້, **ຄພ** 132:7, 18–19, 26.

**ພຣະວິນຍານບໍລິສຸດ.** *ເບິ່ງ* ຂອງປະທານແຫ່ງພຣະວິນຍານບໍລິສຸດ; ດົນໃຈ, ການດົນໃຈ; ນົກເຂົາ, ເຄື່ອງໝາຍຂອງ; ບັບຕິ

ສະມາ, ໃຫ້ບັບຕິສະມາ; ບາບທີ່ອະໄພໃຫ້ບໍ່ໄດ້; ເປີດເຜີຍ, ການເປີດເຜີຍ; ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະຜູ້ປອບໂຍນ; ພຣະວິນຍານສັກສິດແຫ່ງຄຳສັນຍາ *ນຳອີກ*

ສະມາ ຊິກ ອົງທີສາມໃນຝ່າຍພຣະເຈົ້າ (1 ຢຮ 5:7; ຄພ 20:28). ພຣະອົງມີພຣະກາຍທີ່ເປັນພຣະວິນຍານ, ບໍ່ມີພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ (ຄພ 130:22). ພຣະວິນຍານບໍລິສຸດມັກຖືກກ່າວເຖິງວ່າເປັນພຣະວິນຍານ, ຫລື ພຣະວິນຍານຂອງພຣະເຈົ້າ.

ພຣະວິນຍານບໍລິສຸດປະຕິບັດບົດບາດຫລາຍຢ່າງທີ່ສຳຄັນໃນແຜນແຫ່ງຄວາມລອດ. (1) ພຣະອົງເປັນພະຍານເຖິງພຣະບິດາ ແລະ ພຣະບຸດ (1 ກຣທ 12:3; 3 ນຟ 28:11; ອທ 12:41). (2) ພຣະອົງເປີດເຜີຍຄວາມຈິງຂອງທຸກເລື່ອງ (ຢຮ 14:26; 16:13; ມຣນ 10:5; ຄພ 39:6). (3) ພຣະອົງຊຳລະລ້າງຜູ້ໄດ້ກັບໃຈ ແລະ ຮັບບັບຕິສະມາ (ຢຮ 3:5; 3 ນຟ 27:20; ມຊ 6:64–68). (4) ພຣະອົງເປັນພຣະວິນຍານສັກສິດແຫ່ງຄຳສັນຍາ (ຄພ 76:50–53; 132:7, 18–19, 26).

ອຳນາດຂອງພຣະວິນຍານບໍລິສຸດສາມາດມາເຖິງບຸກຄົນໄດ້ກ່ອນຮັບບັບຕິສະມາ ແລະ ເປັນພະຍານວ່າພຣະກິດຕິຄຸນເປັນຄວາມຈິງ. ແຕ່ສິດທີ່ຈະມີພຣະວິນຍານບໍລິສຸດເປັນເພື່ອນຕະຫລອດເວລາ, ຕອນທີ່ບຸກຄົນມີຄ່າຄວນ, ເປັນຂອງປະທານທີ່ສາມາດໄດ້ຮັບພຽງແຕ່ໂດຍການວາງມືຂອງຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກ ຫລັງຈາກການບັບຕິສະມາທີ່ຖືກຕ້ອງເຂົ້າໃນສາດສະໜາຈັກທີ່ແທ້ຈິງຂອງພຣະເຢຊູຄຣິດ.

ພຣະເຢຊູໄດ້ສິດສອນວ່າ ບາບທັງໝົດສາມາດຖືກອະໄພໃຫ້ໄດ້ ຍົກເວັ້ນແຕ່ການໝິ່ນປະໝາດພຣະວິນຍານບໍລິສຸດເທົ່ານັ້ນ (ມທ 12:31–32; ມຣກ 3:28–29; ລກ 12:10; ຮຣ 6:4–8; ຄພ 76:34–35).

ພຣະວິນຍານເຮັດໃຫ້ມະນຸດປະຕິບັດຕາມກົດບັນຍັດຕ່າງໆຂອງພຣະເຈົ້າ, **ອຊກ** 36:27. ອັກຄະສາວົກໄດ້ຖືກສັ່ງໃຫ້ບັບຕິສະມາໃນພຣະນາມຂອງພຣະບິດາ, ຂອງພຣະບຸດ, ແລະ ຂອງພຣະວິນຍານບໍລິສຸດ, **ມທ** 28:19. ພຣະວິນຍານບໍລິສຸດຈະສິດສອນພວກເຈົ້າທຸກສິ່ງ, **ຢຮ** 14:26. ຊາຍທີ່ບໍລິສຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າຕາມທີ່ພຣະວິນຍານບໍລິສຸດດົນໃຈ, **2 ປຕ** 1:21.

ນີໄຟໄດ້ຖືກຊົງນຳໂດຍພຣະວິນຍານ, **1 ນຟ** 4:6. ຄວາມລຶກລັບຂອງພຣະເຈົ້າຈະຖືກເປີດເຜີຍອອກໃຫ້ແກ່ພວກເຂົາໂດຍອຳນາດຂອງພຣະວິນຍານບໍລິສຸດ, **1 ນຟ** 10:17–19. ພຣະວິນຍານບໍລິສຸດສະແດງທຸກຢ່າງທີ່ພວກທ່ານຄວນເຮັດ, **2 ນຟ** 32:5. ໂດຍອຳນາດຂອງພຣະວິນຍານບໍລິສຸດ ທ່ານຈະຮູ້ຈັກຄວາມຈິງຂອງທຸກເລື່ອງ, **ມຣນ** 10:5.

ພຣະວິນຍານບໍລິສຸດຈະບອກເຈົ້າໃນຈິດໃຈ ແລະ ໃນຫົວໃຈຂອງເຈົ້າ, **ຄພ** 8:2. ພຣະວິນຍານພາໃຫ້ເຮັດຄວາມດີ, **ຄພ** 11:12. ພຣະວິນຍານບໍລິສຸດຮູ້ທຸກສິ່ງ, **ຄພ** 35:19. ພຣະວິນຍານບໍລິສຸດສັ່ງສອນເຖິງສິ່ງທີ່ເປັນສັນຕິສຸກຂອງອານາຈັກ, **ຄພ** 36:2 (ຄພ 39:6). ຖ້າຫາກພວກເຈົ້າບໍ່ໄດ້ຮັບພຣະວິນຍານ, ພວກເຈົ້າຈະບໍ່ສິດສອນ, **ຄພ** 42:14. ພຣະວິນຍານບໍລິສຸດເປັນພະຍານເຖິງພຣະບິດາ ແລະ ພຣະບຸດ, **ຄພ** 42:17 (1 ກຣທ 12:3; 3 ນຟ 11:32, 35–36). ແກ່ບາງຄົນມັນຖືກມອບໃຫ້ໂດຍພຣະວິນຍານບໍລິສຸດ ເພື່ອຈະຮູ້ວ່າພຣະເຢຊູຄຣິດຄືພຣະບຸດຂອງພຣະເຈົ້າ, **ຄພ** 46:13. ສິ່ງໃດກໍຕາມທີ່ພວກເຂົາຈະກ່າວເມື່ອໄດ້ຮັບການດົນໃຈໂດຍພຣະວິນຍານບໍລິສຸດ ຈະເປັນພຣະຄຳພີ, **ຄພ** 68:4. ພຣະວິນຍານບໍລິສຸດຈະຖືກສົ່ງໄປໃຫ້ໃນການເປັນພະຍານເຖິງທຸກສິ່ງທັງປວງທີ່ພວກເຈົ້າຈະກ່າວ, **ຄພ** 100:8. ພຣະວິນຍານບໍລິສຸດຈະເປັນເພື່ອນຂອງທ່ານສະເໝີ, **ຄພ** 121:45–46.

**ພັກຜ່ອນ.** *ເບິ່ງ* ສະຫງົບ, ຄວາມສະຫງົບ; ວັນຊະບາໂຕ *ນຳອີກ*

ຄວາມມ່ວນຊື່ນກັບສັນຕິສຸກ ແລະ ອິດສະລະພາບ ຈາກຄວາມກັງວົນໃຈ ແລະ ຄວາມວຸ້ນວາຍ. ພຣະຜູ້ເປັນເຈົ້າໄດ້ສັນຍາສະຖານທີ່ພັກຜ່ອນໄວ້ສຳລັບຜູ້ຕິດຕາມທີ່ຊື່ສັດໃນລະຫວ່າງຊີວິດນີ້. ພຣະອົງຍັງໄດ້ຕຽມສະຖານ

ທີ່ພັກຜ່ອນໄວ້ສຳລັບເຂົາເຈົ້າ ໃນຊີວິດໜ້ານຳອີກ.

ເຮົາຈະນຳພາເຈົ້າໄປ ແລະ ເຈົ້າຈະໄດ້ຮັບການພັກຜ່ອນ, **ອພຍ** 33:14.
ຈົ່ງມາຫາເຮົາ, ແລະ ເຮົາຈະໃຫ້ພວກເຈົ້າໄດ້ຮັບຄວາມເຊົາເມື່ອຍ, **ມທ** 11:28–29.
ພວກເຮົາຈຶ່ງອອກແຮງ ເພື່ອພວກເຮົາຈະໄດ້ເຂົ້າໄປໃນທີ່ພັກຂອງພຣະອົງ, **ຢຄ** 1:7 (ຮຣ 4:1–11). ຜູ້ໃດກໍຕາມທີ່ກັບໃຈ ຈະເຂົ້າໄປໃນທີ່ພັກຂອງເຮົາ, **ແອວ** 12:34. ມີຄົນຢ່າງຫລວງຫລາຍ ທີ່ຖືກເຮັດໃຫ້ບໍລິສຸດ ແລະ ເຂົ້າໄປໃນທີ່ພັກຂອງພຣະຜູ້ເປັນເຈົ້າ, **ແອວ** 13:12–16. ທີ່ສຸຂະເສີມເປັນສະພາບຂອງການພັກຜ່ອນ, **ແອວ** 40:12 (ແອວ 60:13). ຈະບໍ່ມີສິ່ງໃດສາມາດເຂົ້າໄປໃນທີ່ພັກຂອງພຣະອົງໄດ້ນອກຈາກຜູ້ທີ່ໄດ້ຊຳລະລ້າງອາພອນຂອງເຂົາໃຫ້ຂາວສະອາດແລ້ວດ້ວຍໂລຫິດຂອງເຮົາ, **3 ນຟ** 27:19.
ປະກາດການກັບໃຈແກ່ຜູ້ຄົນພວກນີ້, ເພື່ອວ່າເຈົ້າຈະໄດ້ພັກຜ່ອນນຳເຂົາໃນອານາຈັກຂອງພຣະບິດາຂອງເຮົາ, **ຄພ** 15:6 (ຄພ 16:6). ຄົນທີ່ຕາຍໄປແລ້ວ ຈະໄດ້ພັກຜ່ອນຈາກວຽກງານທັງໝົດຂອງພວກເຂົາ, **ຄພ** 59:2 (ພນມ 14:13). ທີ່ພັກຂອງພຣະຜູ້ເປັນເຈົ້າ ຄືຄວາມສົມບູນແຫ່ງລັດສະໝີພາບຂອງພຣະອົງ, **ຄພ** 84:24.

**ພັນທະສັນຍາ.** *ເບິ່ງ* ຄຳສາບານ; ຄຳສາບານ ແລະ ພັນທະສັນຍາຂອງຖານະປະໂລຫິດ; ພັນທະສັນຍາຂອງອັບຣາຮາມ; ພັນທະສັນຍາໃໝ່ ແລະ ເປັນນິດ *ນຳອີກ*

ການຕົກລົງລະຫວ່າງພຣະເຈົ້າ ແລະ ມະນຸດ, ແຕ່ທັງສອງຝ່າຍບໍ່ໄດ້ກະທຳເທົ່າທຽມກັນໃນການຕົກລົງ. ພຣະເຈົ້າມີເງື່ອນໄຂສຳລັບພັນທະສັນຍາ, ແລະ ມະນຸດຕົກລົງທີ່ຈະເຮັດຕາມສິ່ງທີ່ພຣະອົງຂໍໃຫ້ເຂົາເຈົ້າເຮັດ. ແລ້ວພຣະເຈົ້າສັນຍາທີ່ຈະປະທານພອນບາງຢ່າງໃຫ້ສຳລັບການເຊື່ອຟັງຂອງເຂົາເຈົ້າ.

ເຮົາໄດ້ຮັບຫລັກທຳ ແລະ ພິທີການໂດຍພັນທະສັນຍາ. ສະມາຊິກຂອງສາດສະໜາຈັກ ຜູ້ເຮັດພັນທະສັນຍາເຊັ່ນນັ້ນສັນຍາວ່າຈະໃຫ້ກຽດແກ່ມັນ. ຕົວຢ່າງ, ສະມາຊິກໄດ້ເຮັດພັນທະສັນຍານຳພຣະຜູ້ເປັນເຈົ້າຕອນຮັບບັບຕິສະມາ ແລະ ຕໍ່ພັນທະສັນຍາເຫລົ່ານັ້ນໂດຍການຮັບເອົາສິນລະລຶກ. ເຂົາເຈົ້າເຮັດພັນທະສັນຍາຕື່ມອີກຢູ່ໃນພຣະວິຫານ. ຜູ້ຄົນຂອງພຣະຜູ້ເປັນເຈົ້າເປັນຄົນແຫ່ງພັນທະສັນຍາ ແລະ ໄດ້ຮັບພອນຢ່າງຫລວງຫລາຍເມື່ອເຂົາເຈົ້າຮັກສາພັນທະສັນຍາຂອງເຂົາເຈົ້ານຳພຣະຜູ້ເປັນເຈົ້າ.

ເຮົາຈະຕັ້ງພັນທະສັນຍາໄວ້ກັບເຈົ້າ, **ປຖກ** 6:18. ຮັກສາພັນທະສັນຍາຂອງເຮົາ; ແລ້ວພວກເຈົ້າກໍຈະເປັນປະຊາຊົນຂອງເຮົາ, **ອພຍ** 19:5. ຢ່າເຮັດຂໍ້ຕົກລົງໃດໆກັບພວກເຂົາ ຫລືກັບບັນດາພຣະຂອງພວກເຂົາ, **ອພຍ** 23:32. ໃຫ້ຮັກສາວັນຊະບາໂຕເປັນເຄື່ອງໝາຍອັນສຳຄັນແຫ່ງພັນທະສັນຍາ, **ອພຍ** 31:16. ເຮົາຈະບໍ່ລຶບລ້າງພັນທະສັນຍາທີ່ມີໄວ້ກັບພວກເຈົ້າຈັກເທື່ອ, **ຜປ** 2:1. ໄພ່ພົນຂອງເຮົາໄດ້ເຮັດພັນທະສັນຍາກັບເຮົາໂດຍການຖວາຍເຄື່ອງບູຊາ, **ພສສ** 50:5 (ຄພ 97:8).
ຈົ່ງລະນຶກເຖິງພັນທະສັນຍາອັນບໍລິສຸດຂອງພຣະອົງ, **ລກ** 1:72 (ຄພ 90:24).
ອຳນາດຂອງພຣະເຈົ້າໄດ້ລົງມາເທິງຜູ້ຄົນແຫ່ງພັນທະສັນຍາຂອງພຣະຜູ້ເປັນເຈົ້າ, **1 ນຟ** 14:14. ພັນທະສັນຍາທີ່ໄດ້ເຮັດໄວ້ກັບອັບຣາຮາມຈະສຳເລັດໃນຍຸກສຸດທ້າຍ, **1 ນຟ** 15:18 (3 ນຟ 16:5, 11–12; 21:7; ມມ 9:37). ຜູ້ຄົນຂອງເບັນຢາມິນເຕັມໃຈທີ່ຈະເຂົ້າເຮັດພັນທະສັນຍາກັບພຣະເຈົ້າ ເພື່ອຈະກະທຳຕາມພຣະປະສົງຂອງພຣະອົງ, **ມຊຢ** 5:5. ການບັບຕິສະມາເປັນປະຈັກພະຍານວ່າມະນຸດໄດ້ເຂົ້າເຮັດພັນທະສັນຍາກັບພຣະເຈົ້າ ທີ່ຈະຮັບໃຊ້ພຣະອົງ, **ມຊຢ** 18:13. ພວກເຈົ້າເປັນລູກຫລານແຫ່ງພັນທະສັນຍາ, **3 ນຟ** 20:25–26. ເຫລົ່າທູດບັນລຸ ແລະ ເຮັດໃຫ້ວຽກງານແຫ່ງພັນທະສັນຍາຂອງພຣະບິດາສຳເລັດ, **ມຣນ** 7:29–31. ການຫລັ່ງໂລຫິດຂອງພຣະຄຣິດແມ່ນພັນທະສັນຍາ, **ມຣນ** 10:33.
ທຸກຄົນທີ່ເປັນຂອງສາດສະໜາຈັກນີ້ຂອງ

ພຣະຄຣິດ ຈະຍຶດຖືທີ່ຈະຮັກສາພັນທະສັນຍາທັງໝົດ, **ຄພ** 42:78. ຄົນທີ່ຮັກສາພັນທະສັນຍາຍ່ອມເປັນສຸກ, **ຄພ** 54:6. ຄົນໃດທີ່ຝ່າຝືນພັນທະສັນຍານີ້ຈະສູນເສຍໜ້າທີ່ ແລະ ຕຳແໜ່ງຂອງຕົນໃນສາດສະໜາຈັກ, **ຄພ** 78:11–12. ທຸກຄົນເຫລົ່ານັ້ນທີ່ໄດ້ຮັບຖານະປະໂລຫິດ ໄດ້ຮັບຄຳສາບານ ແລະ ພັນທະສັນຍາ, **ຄພ** 84:39–40. ພວກເຂົາເຕັມໃຈທີ່ຈະຍຶດຖືພັນທະສັນຍາຂອງພວກເຂົາໂດຍການເສຍສະລະ, **ຄພ** 97:8. ພັນທະສັນຍາຂອງການແຕ່ງງານສາມາດເປັນນິລັນດອນໄດ້, **ຄພ** 132. ນີ້ຈະເປັນພັນທະສັນຍາຂອງພວກເຮົາ, ວ່າພວກເຮົາຈະດຳເນີນຊີວິດຕາມພິທີການທັງປວງ, **ຄພ** 136:4.

**ພັນທະສັນຍາຂອງອັບຣາຮາມ.** *ເບິ່ງ* ພັນທະສັນຍາ; ພິທີຕັດ; ອັບຣາຮາມ *ບຳອິກ*

ອັບຣາຮາມໄດ້ຮັບພຣະກິດຕິຄຸນ ແລະ ໄດ້ຖືກແຕ່ງຕັ້ງສູ່ຖານະປະໂລຫິດທີ່ສູງກວ່າ (ຄພ 84:14; ອຣຣ 2:11), ແລະ ເພິ່ນໄດ້ແຕ່ງງານລະດັບຊັ້ນສູງ, ຊຶ່ງເປັນພັນທະສັນຍາແຫ່ງຄວາມສູງສົ່ງ (ຄພ 131:1–4; 132:19, 29). ອັບຣາຮາມໄດ້ຮັບຄຳສັນຍາວ່າ ພອນທັງໝົດຂອງພັນທະສັນຍາເຫລົ່ານີ້ຈະຖືກມອບໃຫ້ແກ່ລູກຫລານຂອງເພິ່ນຢູ່ໃນຊ່ວງມະຕະນີ້ (ຄພ 132:29–31; ອຣຣ 2:6–11). ພ້ອມດຽວກັນນີ້, ພັນທະສັນຍາ ແລະ ຄຳສັນຍາເຫລົ່ານີ້ຖືກເອີ້ນວ່າພັນທະສັນຍາຂອງອັບຣາຮາມ. ການຟື້ນຟູພັນທະສັນຍານີ້ເປັນການຟື້ນຟູ ພຣະກິດຕິຄຸນໃນຍຸກສຸດທ້າຍ, ເພາະຜ່ານການຟື້ນຟູນີ້ ປະຊາຊາດທັງປວງຂອງແຜ່ນດິນໂລກຈະໄດ້ຮັບພອນ (ຄລຕ 3:8–9, 29; ຄພ 110:12; 124:58; ອຣຣ 2:10–11).

**ພັນທະສັນຍາໃໝ່ ແລະ ເປັນນິດ.** *ເບິ່ງ* ພັນທະສັນຍາ *ບຳອິກ*

ຄວາມສົມບູນແຫ່ງພຣະກິດຕິຄຸນຂອງພຣະເຢຊູຄຣິດ (ຄພ 66:2). ມັນເປັນສິ່ງໃໝ່ທຸກເທື່ອທີ່ມັນໄດ້ຖືກເປີດເຜີຍອີກ ຫລັງຈາກການປະຖິ້ມຄວາມເຊື່ອ. ມັນເປັນນິດໃນຄວາມໝາຍທີ່ວ່າ ມັນເປັນພັນທະສັນຍາຂອງພຣະເຈົ້າ ແລະ ໄດ້ຊື່ນຊົມກັບມັນໃນທຸກຍຸກທຸກສະໄໝຂອງພຣະກິດຕິຄຸນ ບ່ອນທີ່ຜູ້ຄົນເຕັມໃຈທີ່ຈະຮັບເອົາມັນ. ພັນທະສັນຍາໃໝ່ ແລະ ເປັນນິດ ໄດ້ຖືກເປີດເຜີຍໃໝ່ຕໍ່ມະນຸດຢູ່ເທິງແຜ່ນດິນໂລກໂດຍພຣະເຢຊູຄຣິດ ຜ່ານສາດສະດາໂຈເຊັບ ສະມິດ. ມັນບັນຈຸພິທີການທີ່ສັກສິດ ຊຶ່ງປະຕິບັດໂດຍສິດອຳນາດຂອງຖານະປະໂລຫິດ—ດັ່ງເຊັ່ນການບັບຕິສະມາ ແລະ ການແຕ່ງງານໃນພຣະວິຫານ—ຊຶ່ງຈັດຕຽມໄວ້ສຳລັບຄວາມລອດ, ຄວາມເປັນອະມະຕະ, ແລະ ຊີວິດນິລັນດອນຂອງມະນຸດ. ເມື່ອຜູ້ຄົນຮັບເອົາພຣະກິດຕິຄຸນ ແລະ ສັນຍາວ່າຈະຮັກສາພຣະບັນຍັດຂອງພຣະເຈົ້າ, ພຣະເຈົ້າກໍເຮັດພັນທະສັນຍາທີ່ຈະປະທານພັນທະສັນຍາໃໝ່ ແລະ ເປັນນິດຂອງພຣະອົງໃຫ້ແກ່ພວກເຂົາ.

ເຮົາຈະຕັ້ງພັນທະສັນຍາລະຫວ່າງເຮົາກັບເຈົ້າ, **ປຖກ** 17:7. ລາວຈະໄດ້ຮັບພັນທະສັນຍາແຫ່ງຖານະປະໂລຫິດອັນເປັນນິດ, **ຈບຊ** 25:13. ຜູ້ຄົນໄດ້ປ່ຽນພິທີການ ແລະ ໄດ້ຝ່າຝືນພັນທະສັນຍາອັນເປັນນິດ, **ອຊຢ** 24:5 (ຄພ 1:15). ເຮົາຈະເຮັດພັນທະສັນຍາອັນເປັນນິດກັບພວກເຈົ້າ, **ອຊຢ** 55:3 (ຢມຢ 32:40). ມັນຈະເປັນພັນທະສັນຍາອັນເປັນນິດ, **ອຊກ** 37:26.

ພຣະຜູ້ເປັນເຈົ້າໄດ້ຕັ້ງພັນທະສັນຍາໃໝ່ຂຶ້ນ, ແລະ ເຮັດໃຫ້ພັນທະສັນຍາເດີມພົ້ນສະໄໝໄປ, **ຮຣ** 8:13. ພຣະເຢຊູເປັນຜູ້ເປັນກາງຂອງພັນທະສັນຍາໃໝ່, **ຮຣ** 12:24 (ຄພ 76:69).

ນີ້ຄືພັນທະສັນຍາໃໝ່ ແລະ ເປັນນິດ, **ຄພ** 22:1. ເຮົາໄດ້ສົ່ງພັນທະສັນຍາອັນເປັນນິດຂອງເຮົາມາໃນໂລກ, **ຄພ** 45:9 (ຄພ 49:9). ພຣະຜູ້ເປັນເຈົ້າໄດ້ສົ່ງຄວາມສົມບູນແຫ່ງພຣະກິດຕິຄຸນຂອງພຣະອົງອອກໄປ, ພັນທະສັນຍາອັນເປັນນິດຂອງພຣະອົງ, **ຄພ** 66:2 (ຄພ 133:57). ກ່ອນຈະໄດ້ບັນລຸເຖິງລະດັບສູງສຸດໃນອານາຈັກຊັ້ນສູງໄດ້, ມະນຸດຕ້ອງເຂົ້າສູ່ລະບຽບຂອງພັນທະສັນຍາໃໝ່ ແລະ ເປັນນິດຂອງການແຕ່ງງານ, **ຄພ** 131:1–2. ພັນທະສັນຍາໃໝ່ ແລະ ເປັນນິດໄດ້ຖືກແຕ່ງຕັ້ງໄວ້ສຳລັບ

ຄວາມສົມບູນແຫ່ງລັດສະໝີພາບຂອງພຣະຜູ້ເປັນເຈົ້າ, **ຄພ** 132:6, 19.

**ພັນທະສັນຍາອັນເປັນນິດ.** *ເບິ່ງ* ພັນທະສັນຍາ; ພັນທະສັນຍາໃໝ່ ແລະ ເປັນນິດ

**ພັນປີ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ນະລົກ *ບຳອີກ*

ຊ່ວງໄລຍະໜຶ່ງພັນປີແຫ່ງສັນຕິສຸກ ທີ່ຈະເລີ່ມຕົ້ນຕອນພຣະຄຣິດສະເດັດກັບມາ ເພື່ອປົກຄອງແຜ່ນດິນໂລກດ້ວຍຕົວພຣະອົງເອງ (ຫຼຊ 1:10).

ຊົນຊາດທັງຫລາຍຈະບໍ່ເຮັດເສິກອີກຕໍ່ໄປ, **ອຊຢ** 2:4 (ມກ 4:3; 2 ນຟ 12:4). ດິນແດນທີ່ເຄີຍເປັນຖິ່ນແຫ້ງແລ້ງກັນດານ ຈະກາຍເປັນດັ່ງສວນເອເດນ, **ອຊກ** 36:35.

ພວກເຂົາໄດ້ຄຸ້ມຄອງຮ່ວມກັບພຣະຄຣິດໃນລະຫວ່າງພັນປີ, **ພນມ** 20:4.

ເພາະຄວາມຊອບທຳ, ຊາຕານຈຶ່ງບໍ່ມີອຳນາດ, **1 ນຟ** 22:26.

ເຮົາຈະດຳລົງຢູ່ໃນຄວາມຊອບທຳ ຢູ່ເທິງແຜ່ນດິນໂລກເປັນເວລາພັນປີ, **ຄພ** 29:11. ເມື່ອພັນປີຜ່ານພົ້ນໄປ, ເຮົາຈະລະເວັ້ນແຜ່ນດິນໂລກໄວ້ຊົ່ວໄລຍະໜຶ່ງ, **ຄພ** 29:22. ຊ່ວງໄລຍະພັນປີອັນຍິ່ງໃຫຍ່ຈະມາເຖິງ, **ຄພ** 43:30. ລູກຫລານຂອງຄົນຊອບທຳຈະເຕີບໂຕຂຶ້ນປາດສະຈາກບາບ, **ຄພ** 45:58. ເດັກນ້ອຍຈະເຕີບໃຫຍ່ຂຶ້ນຈົນກວ່າເຂົາຈະເຖົ້າແກ່; ມະນຸດຈະຖືກປ່ຽນໄປໃນພິບຕາດຽວ, **ຄພ** 63:51. ໃນການເລີ່ມຕົ້ນຂອງພັນປີທີເຈັດ ພຣະຜູ້ເປັນເຈົ້າຈະຊຳລະແຜ່ນດິນໂລກໃຫ້ບໍລິສຸດ, **ຄພ** 77:12. ພວກເຂົາຈະບໍ່ມີຊີວິດອີກຈົນກວ່າພັນປີຜ່ານພົ້ນໄປ, **ຄພ** 88:101. ຊາຕານຈະຖືກມັດໄວ້ເປັນເວລາໜຶ່ງພັນປີ, **ຄພ** 88:110. ຄຳບັນຍາຍກ່ຽວກັບພັນປີ, **ຄພ** 101:23–34.

ເປັນເວລາໜຶ່ງພັນປີ ແຜ່ນດິນໂລກຈະພັກຜ່ອນ, **ມຊ** 7:64.

**ພາສາ**

ຄຳ, ເປັນລາຍລັກອັກສອນ ຫລື ຄຳເວົ້າ, ຮ່ວມເຂົ້າກັນໃນແບບແຜນໃດໜຶ່ງໂດຍສະເພາະ ເພື່ອສື່ສານຂໍ້ມູນ, ຄວາມນຶກຄິດ, ແລະ ແນວຄິດ. ວິທີທີ່ເຮົາໃຊ້ພາສາ ເປັນການສະແດງອອກເຖິງຄວາມຮູ້ສຶກຂອງເຮົາຕໍ່ພຣະເຈົ້າ ແລະ ຕໍ່ຄົນອື່ນໆ. ໃນການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ, ພຣະຜູ້ເປັນເຈົ້າຈະປະທານພາສາທີ່ບໍລິສຸດໃຫ້ແກ່ມະນຸດຊາດ (ຊຟຢ 3:8–9).

ມະນຸດທົ່ວທັງແຜ່ນດິນໂລກໄດ້ປາກເວົ້າພາສາດຽວກັນ, **ປຖກ** 11:1. ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ພາສາສັບສົນຕະຫລອດທົ່ວໂລກ, **ປຖກ** 11:4–9.

ທຸກຄົນໄດ້ຍິນພວກເຂົາເລີ່ມປາກພາສາຕ່າງໆ, **ກຈກ** 2:1–6.

ພຣະຜູ້ເປັນເຈົ້າໄດ້ຮັບສັ່ງກັບມະນຸດຕາມພາສາຂອງພວກເຂົາ, **2 ນຟ** 31:3 (ຄພ 1:24). ເບັນຢາມິນໄດ້ສອນພາສາຂອງບັນພະບຸລຸດຂອງເພິ່ນ ໃຫ້ພວກລູກຊາຍຂອງເພິ່ນ, ເພື່ອວ່າພວກເຂົາຈະໄດ້ເປັນຄົນສະຫລາດ, **ມຊຢ** 1:2–5.

ຜູ້ທີ່ເວົ້າຈາອ່ອນໂຍນ ແລະ ເສີມສ້າງ ແມ່ນມາຈາກພຣະເຈົ້າ ຖ້າຫາກເຂົາປະຕິບັດຕາມພິທີການຂອງເຮົາ, **ຄພ** 52:16. ມາຄຸ້ນເຄີຍກັບປຶ້ມທີ່ດີທັງປວງ, ແລະ ກັບພາສາ, ຄຳເວົ້າ, ແລະ ຜູ້ຄົນ, **ຄພ** 90:15.

ອາດາມ ແລະ ລູກຫລານຂອງເພິ່ນມີພາສາຊຶ່ງບໍລິສຸດ ແລະ ບໍ່ເສື່ອມໂຊມ, **ມຊ** 6:5–6, 46. ພຣະເຈົ້າໄດ້ປະທານພາສາທີ່ມີອຳນາດຫລາຍໃຫ້ແກ່ເອນົກ, **ມຊ** 7:13.

**ພາກພຽນ, ຄວາມພາກພຽນ**

ສະໝ່ຳສະເໝີ, ຄວາມພະຍາຍາມທີ່ກ້າຫານ, ໂດຍສະເພາະໃນການຮັບໃຊ້ພຣະຜູ້ເປັນເຈົ້າ ແລະ ການເຊື່ອຟັງພຣະຄຳຂອງພຣະອົງ.

ຈົ່ງເຊື່ອຟັງເຮົາແມ, **ອຊຢ** 55:2.

ພຣະເຈົ້າເປັນຜູ້ໂຜດປະທານລາງວັນແກ່ຜູ້ທີ່ສະແຫວງຫາພຣະອົງ, **ຮຣ** 11:6. ຈົ່ງອົດສາພະຍາຍາມຈົນສຸດກຳລັງ, ເພື່ອຈະເອົາຄຸນນະທຳເພີ່ມຄວາມເຊື່ອ, **2 ປຕ** 1:5.

ຈົ່ງ ສິດ ສອນ ພຣະ ຄຳ ຂອງ ພຣະ ເຈົ້າ ດ້ວຍ ຄວາມພາກພຽນ, **ຢຄ** 1:19. ພວກເຂົາໄດ້ຄົ້ນຄວ້າພຣະຄຳພີຢ່າງພາກພຽນ, **ແອວ** 17:2. ເຂົາ ເຈົ້າ ໄດ້ ເຕັມ ໃຈທີ່ຈະຮັກສາພຣະບັນຍັດດ້ວຍສຸດຄວາມພາກພຽນ, **3 ນຟ** 6:14. ຂໍໃຫ້ພວກເຮົາທຳງານຢ່າງພາກພຽນ, **ມຣນ** 9:6.

ຈົ່ງກະຕືລືລົ້ນໃນອຸດົມການດີ, **ຄພ** 58:27. ທັງບໍ່ໃຫ້ກຽດຄ້ານແຕ່ໃຫ້ທຳງານດ້ວຍກຳລັງຂອງພວກເຈົ້າ, **ຄພ** 75:3. ໃຫ້ເອົາໃຈໃສ່ຢ່າງພາກພຽນຕໍ່ຖ້ອຍ ຄຳ ແຫ່ງຊີວິດນິລັນດອນ, **ຄພ** 84:43. ໃຫ້ທຸກໆຄົນຮຽນຮູ້ໜ້າທີ່ຂອງຕົນ, ແລະ ກະທຳໃນຄວາມພາກພຽນທັງໝົດ, **ຄພ** 107:99.

**ພາດທຣິດ, ເອດເວີດ**

ເປັນສະມາຊິກ ແລະ ຜູ້ນຳລຸ້ນທຳອິດຂອງສາດສະໜາ ຈັກ ຫລັງຈາກມັນໄດ້ຖືກຟື້ນ ຟູຄືນມາໃໝ່ ໃນສະໄໝ ປະຈຸບັນ. ເອດເວີດ ພາດທຣິດ ໄດ້ຮັບໃຊ້ເປັນອະທິການຄົນທຳອິດຂອງສາດສະໜາຈັກ (ຄພ 36; 41:9–11; 42:10; 51:1–18; 115; 124:19).

**ພາບທີ່ມາໃຫ້ເຫັນຄັ້ງທຳອິດ.** *ເບິ່ງ* ການຟື້ນຟູພຣະກິດຕິຄຸນ; ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ການມາປະກົດຂອງພຣະເຈົ້າອົງເປັນພຣະບິດາ ແລະ ພຣະບຸດຂອງພຣະອົງ ພຣະເຢຊູຄຣິດ ຕໍ່ສາດສະດາໂຈເຊັບ ສະມິດ ຢູ່ໃນປ່າ.

ໃນລະດູໃບໄມ້ປົ່ງຂອງປີ 1820, ໂຈເຊັບ ສະມິດ, ຜູ້ລູກ, ມີອາຍຸໄດ້ສິບຫ້າປີ. ເພິ່ນໄດ້ອາໄສ ຢູ່ກັບຄອບຄົວ ຂອງເພິ່ນ ຢູ່ໃນເມືອງພາໄມຣາ, ລັດນິວຢອກ. ຢູ່ທາງຕາເວັນຕົກບໍ່ໄກຈາກເຮືອນ ມີປ່າໃຫຍ່ຢູ່ແຫ່ງໜຶ່ງ. ໂຈເຊັບໄດ້ໄປຫາບ່ອນນັ້ນ ເພື່ອອະທິຖານຫາພຣະເຈົ້າ ຢາກຮູ້ວ່າສາດສະໜາຈັກແຫ່ງໃດຖືກຕ້ອງ. ເພິ່ນມີຄວາມປະທັບໃຈຫລາຍໃນຂະນະທີ່ອ່ານພຣະຄຣິສຕະທຳຄຳພີ ວ່າເພິ່ນຕ້ອງສະແຫວງຫາຄຳຕອບຈາກພຣະເຈົ້າ (ຢກບ 1:5–6). ໃນຄຳຕອບຕໍ່ຄຳອະທິຖານຂອງເພິ່ນ, ພຣະບິດາ ແລະ ພຣະບຸດ ໄດ້ປະກົດຕໍ່ເພິ່ນ ແລະ ໄດ້ບອກເພິ່ນບໍ່ໃຫ້ເຂົ້າຮ່ວມສາດສະໜາຈັກແຫ່ງໃດເລີຍຢູ່ເທິງໂລກໃນຕອນນັ້ນ, ເພາະທຸກແຫ່ງບໍ່ຖືກຕ້ອງ (ຈສ—ປ 1:15–20). ປະສົບການທີ່ສັກສິດນີ້ໄດ້ເລີ່ມຕົ້ນເຫດການທີ່ຕິດຕໍ່ກັນ ຊຶ່ງໄດ້ນຳການຟື້ນຟູພຣະກິດຕິຄຸນ ແລະ ສາດສະໜາຈັກທີ່ແທ້ຈິງຂອງພຣະຄຣິດມາໃຫ້.

**ພາບນິມິດ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ; ຝັນ; ພາບທີ່ມາໃຫ້ເຫັນຄັ້ງທຳອິດ *ນຳອີກ*

ພາບການເປີດເຜີຍກ່ຽວກັບບາງເຫດການ, ບາງຄົນ, ຫລື ບາງສິ່ງ ຜ່ານອຳນາດຂອງພຣະວິນຍານບໍລິສຸດ.

ຕົວຢ່າງຂອງພາບນິມິດທີ່ສຳຄັນແມ່ນລວມທັງ ດັ່ງ ຕໍ່ ໄປ ນີ້: ພາບ ນິມິດ ຂອງ ເອ ເຊ ກຽນ ກ່ຽວກັບຍຸກສຸດທ້າຍ (ອຊກ 37–39), ພາບນິມິດຂອງສະເຕຟາໂນກ່ຽວກັບພຣະເຢຊູປະທັບຢືນຢູ່ທາງເບື້ອງຂວາພຣະຫັດຂອງພຣະເຈົ້າ (ກຈກ 7:55–56), ການເປີດ ເຜີຍ ຂອງໂຢຮັນກ່ຽວກັບຍຸກສຸດທ້າຍ (ພນມ 4–21), ພາບນິມິດຂອງລີໄຮ ແລະ ນີໄຟກ່ຽວກັບຕົ້ນໄມ້ແຫ່ງຊີວິດ (1 ນຟ 8; 10–14), ພາບນິມິດຂອງແອວມາຜູ້ເປັນລູກກ່ຽວກັບທູດ ຂອງພຣະຜູ້ເປັນເຈົ້າ (ມຊຍ 27), ພາບນິມິດຂອງນ້ອງຊາຍຂອງຢາເຣັດກ່ຽວກັບຜູ້ອາໄສທັງໝົດຂອງແຜ່ນດິນໂລກ (ອທ 3:25), ພາບນິມິດກ່ຽວກັບລັດສະໝີພາບ (ຄພ 76), ພາບນິມິດທີ່ມອບໃຫ້ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ ໃນພຣະວິຫານເຄີດແລນ (ຄພ 110), ພາບນິມິດຂອງໂຈເຊັບ ແອັຟ ສະມິດ ກ່ຽວກັບການໄຖ່ຄົນຕາຍ (ຄພ 138), ພາບນິມິດຂອງໂມເຊກ່ຽວກັບພຣະເຈົ້າ ແລະ ການສ້າງຂອງພຣະອົງ (ມຊ 1), ພາບນິມິດຂອງເອນົກກ່ຽວກັບພຣະເຈົ້າ (ມຊ 6–7), ແລະ ພາບທີ່ມາໃຫ້ເຫັນຄັ້ງທຳອິດຂອງໂຈເຊັບ ສະມິດ (ຈສ—ປ 1).

ຊົນຊາດໃດທີ່ບໍ່ມີນິມິດ, ຊົນຊາດນັ້ນກໍຈະຈິບຫາຍ, **ສພສ** 29:18. ຊາຍໜຸ່ມຈະເຫັນນິມິດຕ່າງໆ, **ຢອ** 2:28 (ກຈກ 2:17).

ພຣະອົງໄດ້ປະທານຄວາມຮູ້ໃຫ້ແກ່ຂ້າພະເຈົ້າໂດຍພາບນິມິດ, **2 ນຟ** 4:23.

ເພິ່ນແມ່ນທູດສະຫວັນທີ່ຖືກສົ່ງມາຈາກທີ່

ປະທັບຂອງພຣະເຈົ້າ, **ຈສ—ປ** 1:33. ພວກເຮົາເຊື່ອໃນການພະຍາກອນ, ການເປີດເຜີຍ, ພາບທີ່ມາໃຫ້ເຫັນ, **ຫຼຊ** 1:7.

**ພອນ, ໃຫ້ພອນ, ເປັນພອນ.** *ເບິ່ງ* ການປະຕິບັດຕໍ່ຄົນເຈັບປ່ວຍ; ກົດ; ຂອບຄຸນ, ຂອບໃຈ, ຄວາມຂອບຄຸນ; ປິຕຸພອນ; ພຣະຄຸນ *ນຳອີກ*

ເພື່ອມອບພຣະກະລຸນາຈາກສະຫວັນໃຫ້ບາງຄົນ. ອັນໃດກໍຕາມທີ່ເພີ່ມໃສ່ກັບຄວາມສຸກທີ່ແທ້ຈິງ, ຄວາມຢູ່ເຢັນເປັນສຸກ, ຫລືຄວາມຈະເລີນກ້າວໜ້າແມ່ນ ພອນ.

ພອນທຸກປະການ ແມ່ນຂຶ້ນກັບກົດນິລັນດອນ (ຄພ 130:20–21). ເພາະວ່າພຣະເຈົ້າປະສົງໃຫ້ລູກໆຂອງພຣະອົງພົບຄວາມສຸກໃນຊີວິດ (2 ນຟ 2:25), ພຣະອົງປະທານພອນໃຫ້ເຂົາ ອີງຕາມຄວາມເຊື່ອຟັງຂອງເຂົາຕໍ່ພຣະບັນຍັດຂອງພຣະອົງ (ຄພ 82:10), ໃນການຕອບຄຳອະທິຖານ ຫລື ພິທີການຂອງຖານະປະໂລຫິດ (ຄພ 19:38; 107:65–67), ຫລື ຜ່ານພຣະຄຸນຂອງພຣະອົງ (2 ນຟ 25:23).

ຂໍ້ຄວາມທີ່ຮູ້ຈັກກັນດີກ່ຽວກັບພອນແມ່ນຄຳບູລົມສຸກ (ມທ 5:1–12; 3 ນຟ 12:1–12).

*ທົ່ວໄປ:* ເຮົາຈະໃຫ້ເຈົ້າເປັນຊົນຊາດທີ່ຍິ່ງໃຫຍ່, ແລະ ເຮົາຈະອວຍພອນເຈົ້າ, **ປຖກ** 12:2–3 (1 ນຟ 15:18; ອຣຮ 2:9–11). ຄົນຊອບທຳຈະໄດ້ຮັບພອນນາໆປະການ, **ສພສ** 10:6. ຄົນຊື່ສັດໃຊ້ຊີວິດເຕັມໄປດ້ວຍຄວາມສຸກ, **ສພສ** 28:20. ພຣະຜູ້ເປັນເຈົ້າຈະໄຂປະຕູສະຫວັນ ແລະ ຖອກເທພຣະພອນລົງມາຍັງພວກເຈົ້າ, **ມລກ** 3:10 (3 ນຟ 24:10).

ຄຳບູລົມສຸກສັນຍາພອນ, **ມທ** 5:1–12 (3 ນຟ 12:1–12). ຄວາມສຸກມີແກ່ຄົນທັງຫລາຍທີ່ໄດ້ຮັບເຊີນມາໃນງານລ້ຽງມຸງຄຸນສົມຣົດຂອງພຣະເມສານ້ອຍ, **ພນມ** 19:9.

ຄົນທີ່ຊອບທຳຍ່ອມເປັນທີ່ໂປດປານຂອງພຣະເຈົ້າ, **1 ນຟ** 17:35 (ມຊຢ 10:13). ຖ້າຫາກລູກເຊື່ອຟັງ, ພໍ່ຈະໃຫ້ພອນແກ່ລູກ, **2 ນຟ** 1:28. ພໍ່ໃຫ້ພອນແກ່ລູກທີ່ເປັນພອນດຽວກັນ, **2 ນຟ** 4:9. ພຣະອົງຈະປະທານພອນໃຫ້ພວກທ່ານໂດຍທັນທີ, **ມຊຢ** 2:24. ພຣະຜູ້ເປັນເຈົ້າໄດ້ປະທານພອນ ແລະ ເຮັດໃຫ້ຜູ້ທີ່ໄວ້ວາງໃຈໃນພຣະອົງຈະເລີນຮຸ່ງເຮືອງຂຶ້ນ, **ຮລມ** 12:1.

ຈົ່ງຊ່ວຍນຳວຽກງານຂອງເຮົາອອກມາ, ແລະ ເຈົ້າຈະໄດ້ຮັບພອນ, **ຄພ** 6:9. ຈົ່ງອະທິຖານສະເໝີ, ແລະ ພອນຂອງເຈົ້າຈະຍິ່ງໃຫຍ່, **ຄພ** 19:38. ຈົ່ງຮັບບັບຕິສະມາ, ແລ້ວເຈົ້າຈະໄດ້ຮັບພຣະວິນຍານຂອງເຮົາ ແລະ ພອນອັນຍິ່ງໃຫຍ່ທີ່ສຸດຢ່າງທີ່ເຈົ້າບໍ່ເຄີຍຮູ້ມາກ່ອນ, **ຄພ** 39:10. ເພາະພອນຈະມາເຖິງຫລັງຈາກຄວາມທຸກຍາກລຳບາກຢ່າງຫລວງຫລາຍ, **ຄພ** 58:4. ມະນຸດບໍ່ເຊື່ອຟັງ; ເຮົາຍົກເລີກ ແລະ ເຂົາບໍ່ໄດ້ຮັບພອນ, **ຄພ** 58:32. ເຈົ້າຍັງບໍ່ເຂົ້າໃຈພອນອັນຍິ່ງໃຫຍ່ທີ່ພຣະບິດາໄດ້ຕຽມໄວ້ໃຫ້ເຈົ້າເທື່ອ, **ຄພ** 78:17. ຈາກຖານະປະໂລຫິດສູງ ການປະຕິບັດພິທີການ ແລະ ພອນມາເຖິງສາດສະໜາຈັກ, **ຄພ** 107:65–67. ມີກົດ ຊຶ່ງໃນນັ້ນ ພອນທັງປວງໄດ້ຖືກກຳນົດໄວ້ແລ້ວ, **ຄພ** 130:20. ຜູ້ຄົນທັງປວງທີ່ຢາກມີພອນຈາກມືຂອງເຮົາ ຈະປະຕິບັດຕາມກົດ, **ຄພ** 132:5. ພອນທັງປວງຖືກເກັບໄວ້ສຳລັບຄົນທີ່ຮັກພຣະຜູ້ເປັນເຈົ້າ, **ຄພ** 138:52.

ອັບຣາຮາມໄດ້ສະແຫວງຫາພອນຂອງບັນພະບຸລຸດ ແລະ ສິດທິທີ່ຈະປະຕິບັດພອນດັ່ງກ່າວ, **ອຣຮ** 1:2.

*ການໃຫ້ພອນແກ່ເດັກນ້ອຍ:* ພຣະອົງກໍໄດ້ອູ້ມເດັກນ້ອຍນັ້ນ ວາງມືໃສ່ ແລະ ອວຍພອນພວກເຂົາ, ມຣກ 10:16.

ພຣະອົງໄດ້ເອົາເດັກນ້ອຍຂອງພວກເຂົາມາເທື່ອລະຄົນ, ແລະ ອວຍພອນພວກເຂົາ, **3 ນຟ** 17:21.

ພວກແອວເດີຕ້ອງໃຫ້ພອນເດັກນ້ອຍໃນພຣະນາມຂອງພຣະເຢຊູຄຣິດ, **ຄພ** 20:70.

**ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ.** *ເບິ່ງ* ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ *ນຳອີກ*

ບຸກຄົນທີ່ດູແລທຸລະກິດ ຫລື ຊັບສິນຂອງຄົນອື່ນ. ສິ່ງທີ່ຜູ້ພິທັກຮັກສາດູແລ ຖືກເອີ້ນວ່າ ການພິທັກຮັກສາ. ທຸກສິ່ງທັງປວງຢູ່ເທິງ

ແຜ່ນດິນໂລກ ເປັນກຳມະສິດຂອງພຣະຜູ້ເປັນເຈົ້າ; ພວກເຮົາເປັນຜູ້ພິທັກຮັກສາຂອງພຣະອົງ. ພວກເຮົາເປັນຜູ້ຮັບຜິດຊອບຕໍ່ພຣະຜູ້ເປັນເຈົ້າ, ແຕ່ພວກເຮົາສາມາດລາຍງານການພິທັກຮັກສາຂອງເຮົາຕໍ່ຜູ້ແທນທີ່ມີສິດອຳນາດຂອງພຣະເຈົ້າໄດ້. ເມື່ອພວກເຮົາໄດ້ຮັບການເອີ້ນໃຫ້ຮັບໃຊ້ຈາກພຣະຜູ້ເປັນເຈົ້າ ຫລື ຜູ້ຮັບໃຊ້ທີ່ມີສິດອຳນາດຂອງພຣະອົງ, ການພິທັກຮັກສານັ້ນ ອາດຮ່ວມດ້ວຍພາລະກິດທາງວິນຍານ ແລະ ທາງໂລກນຳອີກ (ຄພ 29:34).

ເຈົ້າເປັນຜູ້ສັດຊື່ໃນຂອງເລັກນ້ອຍ, ເຮົາຈະໃຫ້ເຈົ້າຮັບຜິດຊອບດູແລສິ່ງຂອງຫລາຍຢ່າງ, **ມທ** 25:14–23. ຜູ້ໃດໄດ້ຮັບຫລາຍ ກໍຈະທວງເອົາກັບຜູ້ນັ້ນຫລາຍ, **ລກ** 12:48 (ຄພ 82:3). ພຣະເຢຊູໄດ້ເລົ່າຄຳອຸປະມາເລື່ອງຜູ້ຈັດການທີ່ບໍ່ທ່ຽງທຳ, **ລກ** 16:1–8.

ຜູ້ໃດທີ່ຖືກພົບວ່າເປັນຜູ້ພິທັກຮັກສາທີ່ຊື່ສັດຈະມີຄວາມຊື່ນຊົມກັບພຣະຜູ້ເປັນເຈົ້າ, **ຄພ** 51:19. ທຸກໆຄົນຈະໄດ້ລາຍງານເລື່ອງລາວກ່ຽວກັບສິ່ງທີ່ຢູ່ໃນຄວາມພິທັກຮັກສາຂອງເຂົາ, **ຄພ** 72:3–5. ຜູ້ພິທັກຮັກສາທີ່ຊື່ສັດ ແລະ ສະຫລາດຈະໄດ້ຮັບທຸກສິ່ງທັງປວງເປັນມູນມໍລະດົກ, **ຄພ** 78:22. ພຣະຜູ້ເປັນເຈົ້າຈະເຮັດໃຫ້ທຸກຄົນຮັບຜິດຊອບ ເປັນຜູ້ພິທັກຮັກສາພອນຝ່າຍແຜ່ນດິນໂລກ, **ຄພ** 104:11–17 (ຄພ 42:32). ຈົ່ງພາກພຽນ ເພື່ອວ່າພວກເຈົ້າຈະໄດ້ເປັນຜູ້ພິທັກຮັກສາທີ່ສະຫລາດ, **ຄພ** 136:27.

**ພິທີການ.** *ເບິ່ງ* ຄວາມລອດສຳລັບຄົນຕາຍ; ຜະນຶກ, ການຜະນຶກ; ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ; ລອດ, ຄວາມລອດ; ລຳດັບການສືບເຊື້ອສາຍ *ນຳອີກ*

ພິທີການ ແລະ ພິທີທີ່ສັກສິດ. ພິທີການທີ່ລວມທັງການປະຕິບັດທີ່ມີຄວາມໝາຍທາງວິນຍານ. ພິທີການກໍໝາຍເຖິງກົດ ແລະ ຂໍ້ກຳນົດຂອງພຣະເຈົ້າດ້ວຍ.

ພິທີການໃນສາດສະໜາຈັກຮ່ວມດ້ວຍການປະຕິບັດຕໍ່ຄົນເຈັບປ່ວຍ (ຢກບ 5:14–15), ການໃຫ້ພອນ ສິນລະລຶກ (ຄພ 20:77, 79), ການບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ (ມທ 3:16; ຄພ 20:72–74), ການໃຫ້ພອນແກ່ເດັກນ້ອຍ (ຄພ 20:70), ການມອບພຣະວິນຍານບໍລິສຸດ (ຄພ 20:68; 33:15), ການມອບຖານະປະໂລຫິດ (ຄພ 84:6–16; 107:41–52), ພິທີການຂອງພຣະວິຫານ (ຄພ 124:39), ແລະ ການແຕ່ງງານໃນພັນທະສັນຍາໃໝ່ ແລະ ເປັນນິດ (ຄພ 132:19–20).

ເຈົ້າຈົ່ງສິດສອນພວກເຂົາໃຫ້ຮູ້ຂໍ້ຄຳສັ່ງ, **ອພຍ** 18:20. ກໍໄດ້ຮັກສາກົດບັນຍັດທັງຫລາຍຂອງເຮົາ, ແລະ ເຊື່ອຟັງຂໍ້ຄຳສັ່ງທັງໝົດຂອງເຮົາ, **ອຊກ** 11:20.

ຜູ້ຄົນໄດ້ເຄັ່ງຄັດໃນການຍຶດຖືພິທີການຂອງພຣະເຈົ້າ, **ແອວ** 30:3. ມີປະໂຫຍດຫຍັງທີ່ເຮົາຈະປະຕິບັດຕາມພິທີການຕ່າງໆຂອງພຣະອົງ, **3 ນຟ** 24:13–14.

ຄົນທີ່ອະທິຖານ ແລະ ສຳນຶກຜິດ ເຮົາຈະຮັບຮູ້ຖ້າຫາກເຂົາປະຕິບັດຕາມພິທີການຂອງເຮົາ, **ຄພ** 52:14–19.

ມະນຸດຊາດທັງປວງຈະລອດໄດ້, ໂດຍການປະຕິບັດຕາມກົດ ແລະ ພິທີການແຫ່ງພຣະກິດຕິຄຸນ, **ຫຼຊ** 1:3.

*ພິທີການກະທຳແທນ:* ພິທີທາງສາດສະໜາປະຕິບັດໂດຍຜູ້ທີ່ມີຊີວິດຢູ່ ແທນຜູ້ທີ່ໄດ້ລ່ວງລັບໄປແລ້ວ. ພິທີການເຫລົ່ານີ້ຈະໄດ້ຜົນ ກໍຕໍ່ເມື່ອຜູ້ທີ່ຖືກກະທຳແທນຍອມຮັບພິທີການເຫລົ່ານັ້ນ, ຮັກສາພັນທະສັນຍາທີ່ກ່ຽວຂ້ອງກັບມັນ, ແລະ ໄດ້ຮັບການຜະນຶກໂດຍພຣະວິນຍານສັກສິດແຫ່ງຄຳສັນຍາ. ພິທີການເຫລົ່ານີ້ໄດ້ຖືກປະຕິບັດຢູ່ໃນພຣະວິຫານໃນທຸກວັນນີ້.

ຖ້າຫາກພຣະເຈົ້າບໍ່ບັນດານໃຫ້ຄົນຕາຍຄືນຂຶ້ນມາແທ້ ດ້ວຍເຫດໃດຈຶ່ງມີຄົນຮັບບັບຕິສະມາແທນຄົນຕາຍ, **1 ກຣທ** 15:29.

ການບັບຕິສະມາແທນຄົນຕາຍຖືກປະຕິບັດຢູ່ໃນພຣະວິຫານ, **ຄພ** 124:29–36. ວິນຍານຢູ່ໃນໂລກວິນຍານໄດ້ຖືກສິດສອນເລື່ອງການບັບຕິສະມາແທນ ເພື່ອການປົດບາບ, **ຄພ** 138:29–34.

**ພິທີການກະທຳແທນ.** *ເບິ່ງ* ຄວາມລອດສຳລັບຄົນຕາຍ; ພິທີການ—ພິທີການກະທຳແທນ

**ພິທີຕັດ.** *ເບິ່ງ* ພັນທະສັນຍາຂອງອັບຣາຮາມ *ນຳອີກ*

ເຄື່ອງໝາຍຂອງພັນທະສັນຍາຂອງອັບຣາຮາມສຳລັບຜູ້ຊາຍຊາວອິດສະຣາເອນໃນຍຸກສະໄໝພຣະຄຳພີເດີມ (ປຖກ 17:10–11, 23–27; ປຈສ, ປຖກ 17:11 [ພາກທ້ອຍທ້າຍ]). ພິທີຕັດໄດ້ຖືກປະຕິບັດໂດຍການຕັດ "ໜັງຫຸ້ມປາຍອະໄວຍະວະເພດ" ຂອງເດັກແດງທາລົກຜູ້ຊາຍ ແລະ ຜູ້ຊາຍຜູ້ໃຫຍ່ອອກ. ຜູ້ທີ່ໄດ້ເຮັດຈະຊື່ນຊົມກັບສິດທິພິເສດ ແລະ ຮັບເອົາໜ້າທີ່ຮັບຜິດຊອບຂອງພັນທະສັນຍາ. ພິທີຕັດທີ່ເປັນເຄື່ອງໝາຍຂອງພັນທະສັນຍາໄດ້ຖືກເຊົາປະຕິບັດກັນເນື່ອງດ້ວຍພາລະກິດຂອງພຣະຄຣິດ (ມຣນ 8:8; ຄພ 74:3–7).

**ພິພາກສາ, ການພິພາກສາ, ຜູ້ພິພາກສາ.** *ເບິ່ງ* ກ່າວໂທດ, ການກ່າວໂທດ; ພຣະເຢຊູຄຣິດ—ພິພາກສາ; ພິພາກສາ, ການພິພາກສາຄັ້ງສຸດທ້າຍ *ນຳອີກ*

ເພື່ອປະເມີນການປະພຶດໃນຄວາມສຳພັນຕໍ່ຫລັກທຳຂອງພຣະກິດຕິຄຸນ; ເພື່ອຕັດສິນໃຈ; ເພື່ອຈະໄດ້ຫລິງເຫັນຄວາມດີຈາກຄວາມຊົ່ວ.

ໂມເຊໄດ້ນັ່ງພິຈາລະນາເພື່ອຕັດສິນຜູ້ຄົນ, **ອພຍ** 18:13. ຈົ່ງທ່ຽງທຳເມື່ອພວກເຈົ້າຕັດສິນຄະດີທາງກົດໝາຍ, **ລລວ** 19:15.

ຢ່າຕັດສິນຄົນອື່ນ, ເພື່ອວ່າພຣະເຈົ້າຈະບໍ່ຕັດສິນເຈົ້າ, **ມທ** 7:1 (ປຈສ, ມທ 7:1–2; ລກ 6:37; 3 ນຟ 14:1). ແຕ່ຄົນບາບທັງຫລາຍທີ່ມີກົດບັນຍັດ ແລະ ເຮັດຜິດບາບກໍຈະຖືກໂທດຕາມກົດບັນຍັດນັ້ນ, **ຣມ** 2:12. ໄພ່ພົນຂອງພຣະເຈົ້າຈະຕັດສິນໂລກ, **1 ກຣທ** 6:2–3.

ພຣະບຸດຂອງພຣະເຈົ້າອົງຜູ້ຢູ່ຕະຫລອດໄປເປັນນິດໄດ້ຖືກຕັດສິນໂດຍທາງໂລກ, **1 ນຟ** 11:32. ອັກຄະສາວົກສິບສອງຂອງພຣະເມສານ້ອຍຈະມາຕັດສິນຝູງຊົນສິບສອງເຜົ່າຂອງອິດສະຣາເອນ, **1 ນຟ** 12:9 (ຄພ 29:12). ຄວາມຕາຍ, ນະລົກ, ມານ, ແລະ ທຸກຢ່າງທີ່ຖືກຍຶດໄວ້ນັ້ນຕ້ອງຖືກພິພາກສາ, **2 ນຟ** 28:23 (1 ນຟ 15:33). ຖ້າຫາກພວກທ່ານຕັດສິນຄົນທີ່ຂໍເຂົ້າຂອງຈາກພວກທ່ານ, ການກ່າວໂທດພວກທ່ານຈະທ່ຽງທຳຫລາຍກວ່ານັ້ນພຽງໃດ ເພາະການບໍ່ໃຫ້ເຂົ້າຂອງ ຂອງພວກທ່ານ, **ມຊຢ** 4:22. ມະນຸດຈະຖືກພິພາກສາຕາມວຽກງານຂອງຕົນເອງ, **ແອວ** 41:3. ຕັດສິນໂດຍຊອບທຳ, ແລະ ຄວາມຍຸດຕິທຳຈະກັບຄືນມາຫາລູກອີກ, **ແອວ** 41:14. ໂລກຈະໄດ້ຮັບການພິພາກສາຈາກໜັງສືທີ່ຈະຂຽນ, **3 ນຟ** 27:23–26 (ພນມ 20:12). ຜູ້ທີ່ເຫລືອຢູ່ຂອງຜູ້ຄົນພວກນີ້ອີກຈະຮັບການຕັດສິນໂດຍຄົນສິບສອງຄົນ ຜູ້ທີ່ພຣະເຢຊູໄດ້ເລືອກໄວ້ໃນແຜ່ນດິນນີ້, **ມມ** 3:18–20. ມໍມອນໄດ້ອະທິບາຍວິທີທີ່ຈະຕັດສິນຄວາມດີຈາກຄວາມຊົ່ວ, **ມຣນ** 7:14–18.

ຈົ່ງໄວ້ວາງໃຈໃນພຣະວິນຍານນັ້ນ ຊຶ່ງພາໃຫ້ຕັດສິນຢ່າງຊອບທຳ, **ຄພ** 11:12. ພວກເຈົ້າຄວນກ່າວໃນໃຈຂອງພວກເຈົ້າວ່າ—ໃຫ້ພຣະເຈົ້າຕັດສິນລະຫວ່າງຂ້າພະເຈົ້າກັບທ່ານ, **ຄພ** 64:11. ສາດສະໜາຈັກຂອງພຣະຜູ້ເປັນເຈົ້າຈະພິພາກສາປະຊາຊາດ, **ຄພ** 64:37–38. ພຣະບຸດໄດ້ໄປຢ້ຽມຢາມບັນດາວິນຍານຢູ່ໃນຄຸກ ເພື່ອພວກເຂົາຈະໄດ້ຮັບການພິພາກສາຕາມມະນຸດໃນເນື້ອໜັງ, **ຄພ** 76:73 (1 ປຕ 4:6). ອະທິການຈະເປັນຜູ້ຕັດສິນທົ່ວໄປ, **ຄພ** 107:72–74. ພຣະຜູ້ເປັນເຈົ້າຈະພິພາກສາມະນຸດທັງປວງຕາມວຽກງານຂອງພວກເຂົາ, ຕາມຄວາມປາດຖະໜາຂອງໃຈຂອງພວກເຂົາ, **ຄພ** 137:9.

**ພິພາກສາ, ການພິພາກສາຄັ້ງສຸດທ້າຍ.** *ເບິ່ງ* ກ່າວໂທດ, ການກ່າວໂທດ; ພຣະເຢຊູຄຣິດ—ພິພາກສາ; ພິພາກສາ, ການພິພາກສາ, ຜູ້ພິພາກສາ *ນຳອີກ*

ການພິພາກສາຄັ້ງສຸດທ້າຍ ວ່າຈະເກີດຂຶ້ນຫລັງຈາກການຟື້ນຄືນຊີວິດ. ພຣະເຈົ້າ, ຜ່ານທາງພຣະເຢຊູຄຣິດ, ຈະພິພາກສາແຕ່ລະຄົນເພື່ອພິຈາລະນາລັດສະໝີພາບນິລັນດອນທີ່ເຂົາຈະໄດ້ຮັບ. ການພິພາກສານີ້ຈະອີງຕາມການເຊື່ອຟັງຂອງແຕ່ລະຄົນຕໍ່ພຣະບັນຍັດຂອງພຣະເຈົ້າ, ລວມທັງການຮັບຮູ້ການເສຍສະລະຊົດໃຊ້ຂອງພຣະເຢຊູຄຣິດ.

ພຣະບິດາໄດ້ມອບການພິພາກສາທັງໝົດໃຫ້ແກ່ພຣະບຸດ, **ຢຮ** 5:22. ເຮົາທຸກຄົນຈະຕ້ອງຢືນຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ, **ຣມ** 14:10. ຄົນທີ່ຕາຍແລ້ວຈະຖືກພິພາກສາຕາມສິ່ງທີ່ມີບັນທຶກໄວ້, **ພນມ** 20:12 (ຄພ 128:6–7).

ທ່ານຈະຖືກນຳມາຫາການພິພາກສາເພາະການກະທຳທຸກຢ່າງຂອງທ່ານ, **1 ນຟ** 10:20. ອັກຄະສາວົກສິບສອງຄົນກັບສານຸສິດຊາວນີໄຟສິບສອງຄົນ ຈະຕັດສິນອິດສະຣາເອນ, **1 ນຟ** 12:9–10 (ຄພ 29:12). ທຸກຄົນຕ້ອງປະກົດຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະຜູ້ບໍລິສຸດ, **2 ນຟ** 9:15. ຈົ່ງຕຽມຈິດວິນຍານຂອງທ່ານໄວ້ສຳລັບວັນອັນຮຸ່ງເຮືອງເຫລືອງເຫລື້ອມນັ້ນ, **2 ນຟ** 9:46. ພວກທ່ານເຫັນຕົວເອງໄດ້ບໍວ່າ ຢູ່ໜ້າສານຂອງພຣະເຈົ້າ, **ແອວ** 5:17–25. ພຣະເຢຊູຄຣິດຈະຢືນຂຶ້ນເພື່ອພິພາກສາໂລກ, **3 ນຟ** 27:16.

ພຣະຜູ້ເປັນເຈົ້າຈະສະເດັດມາດ້ວຍການສາບແຊ່ງ ເພື່ອພິພາກສາຄົນອະທຳ, **ຄພ** 133:2.

**ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ.** *ເບິ່ງ* ຜູ້ຍິງ, ກຸ່ມຜູ້ຍິງ; ມະນຸດ; ເອື້ອຍນ້ອງ *ບຳອີກ*

ໃນຖານະທີ່ເປັນລູກໆຂອງພຣະບິດາເທິງສະຫວັນ, ຊາຍ ແລະ ຍິງທຸກຄົນເປັນອ້າຍເອື້ອຍນ້ອງກັນທາງວິນຍານ. ໃນສາດສະໜາຈັກ, ສະມາຊິກຜູ້ຊາຍ ແລະ ໝູ່ເພື່ອນຂອງສາດສະໜາຈັກມັກຖືກເອີ້ນວ່າ ບຣະເດີ ຫລືວ່າ ອ້າຍນ້ອງ.

ເມື່ອເຈົ້າກັບຄືນມາຫາເຮົາ, ແລ້ວເຈົ້າຕ້ອງຊູແຮງບັນດາພີ່ນ້ອງຂອງເຈົ້າໄວ້, **ລກ** 22:32. ຜູ້ໃດທີ່ບໍ່ຮັກພີ່ນ້ອງຂອງຕົນ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ, **1 ຢຮ** 3:10–17.

ຈົ່ງຄິດວ່າ ພີ່ນ້ອງຂອງພວກທ່ານກໍເໝືອນກັນກັບຕົວຂອງພວກທ່ານເອງ, **ຢຄ** 2:17.

ໃຫ້ທຸກໆຄົນນັບຖືອ້າຍນ້ອງຂອງຕົນເໝືອນດັ່ງຕົນເອງ, **ຄພ** 38:24–25. ຈົ່ງເພີ່ມຄວາມເຂັ້ມແຂງໃຫ້ແກ່ອ້າຍນ້ອງຂອງເຈົ້າໃນການສົນທະນາທຸກຢ່າງຂອງເຈົ້າ, **ຄພ** 108:7.

**ພູໝາກກອກເທດ.** *ເບິ່ງ* ໝາກກອກເທດ, ພູ

**ເພັນຕາຕຸກ.** *ເບິ່ງ* ຈົດເຊັນບັນຊີ; ປະຖົມມະການ; ພຣະຄຳພີເດີມ; ພຣະບັນຍັດສອງ; ໂມເຊ; ລະບຽບພວກເລວີ; ອົບພະຍົບ *ບຳອີກ*

ຊື່ໜຶ່ງອີກທີ່ເອີ້ນໜັງສືຫ້າເຫລັ້ມທຳອິດໃນພຣະຄຳພີເດີມ—ປະຖົມມະການ, ອົບພະຍົບ, ລະບຽບພວກເລວີ, ຈົດບັນຊີ, ແລະ ພຣະບັນຍັດສອງ. ຊາວຢິວໄດ້ອ້າງເຖິງໜັງສືເຫລົ່ານີ້ວ່າເປັນ ໂທຣາ ຫລື ກົດຂອງອິດສະຣາເອນ. ໂມເຊເປັນຄົນຂຽນໜັງສືເຫລົ່ານີ້ (1 ນຟ 5:10–11).

**ເພັນເຕຄໍສະເຕ.** *ເບິ່ງ* ກົດຂອງໂມເຊ *ບຳອີກ*

ພາກສ່ວນໜຶ່ງຂອງກົດຂອງໂມເຊ, ງານລ້ຽງຂອງວັນເພັນເຕຄໍສະເຕ ຫລື ໝາກຜົນທຳອິດ ໄດ້ຖືກຈັດຂຶ້ນຫ້າສິບມື້ ຫລັງຈາກງານປັດສະຄາ (ລລວ 23:16). ວັນເພັນເຕຄໍສະເຕເປັນການສະເຫລີມສະຫລອງການເກັບກ່ຽວ, ແລະ ໃນພຣະຄຳພີເດີມ ມັນຖືກເອີ້ນວ່າ ເທດສະການແຫ່ງການເກັບກ່ຽວ ຫລື ເທດສະການປຸກຕູບ. ແມ່ນເທດສະການນີ້ແຫລະທີ່ກຳລັງສະຫລອງກັນຢູ່ ຕອນອັກຄະສາວົກໃນເຢຣູຊາເລັມເຕັມໄປດ້ວຍພຣະວິນຍານບໍລິສຸດ ແລະ ເວົ້າພາສາຕ່າງໆ (ກຈກ 2; ຄພ 109:36–37).

**ເພໂຣຣັນ**

ຫົວໜ້າຜູ້ຕັດສິນຊາວນີໄຟຄົນທີສາມ ໃນພຣະຄຳພີມໍມອນ (ແອວ 50:39–40; 51:1–7; 59–62).

**ເພງຂອງໂຊໂລໂມນ**

ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມ. ສາດສະດາໂຈເຊັບ ສະມິດ ໄດ້ສອນວ່າ ເພງຂອງໂຊໂລໂມນ ບໍ່ໄດ້ເປັນການຂຽນທີ່ດົນໃຈ.

**ເພງຄ່ຳຄວນ, ພຣະທຳ**

ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມ, ຂຽນໂດຍເຢເຣມີຢາ. ມັນບັນຈຸກາບກອນ ຫລື ເພງຄ່ຳຄວນ ເພາະການຕົກຂອງເຢຣູຊາເລັມ ແລະ

ປະຊາຊາດອິດສະຣາເອນ. ໜັງສືເຫລັ້ມນີ້ໄດ້ຖືກຂຽນຂຶ້ນຫລັງຈາກການຕົກຂອງນະຄອນ ປະມານ 586 ປີ ກ່ອນ ຄ.ສ.

**ເພງສັນລະເສີນ.** *ເບິ່ງ* ດາວິດ; ດົນຕີ, ເພງ *ນຳອີກ*

ກາບກອນ ຫລື ເພງສວດທີ່ດົນໃຈ.

*ໜັງສືເພງສັນລະເສີນ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມ ທີ່ບັນຈຸເພງສັນລະເສີນຈຳນວນໜຶ່ງ, ຊຶ່ງຫລາຍບົດແມ່ນກ່ຽວກັບພຣະຄຣິດ. ພຣະທຳເພງສັນລະເສີນມັກຈະຖືກກ່າວເຖິງເລື້ອຍໆຢູ່ໃນພຣະຄຳພີໃໝ່.

ດາວິດໄດ້ຂຽນເພງສັນລະເສີນຫລາຍບົດ. ເພງສັນລະເສີນໄດ້ຖືກຂຽນຂຶ້ນ ເພື່ອສັນລະເສີນພຣະເຈົ້າ. ຫລາຍບົດໄດ້ກາຍເປັນເພງ.

**ເພງສວດ.** *ເບິ່ງ* ດົນຕີ, ເພງ; ຮ້ອງ *ນຳອີກ*

ເພງສັນລະເສີນພຣະເຈົ້າ

ອັກຄະສາວົກສິບສອງໄດ້ຮ້ອງເພງສັນລະເສີນບົດໜຶ່ງກ່ອນພຣະຜູ້ເປັນເຈົ້າໄປຫາສວນເຄັດເຊມາເນ, **ມທ** 26:30.

ພຣະຜູ້ເປັນເຈົ້າໄດ້ເອີ້ນເອມມາ ສະມິດ ໃຫ້ເລືອກເພງສວດອັນສັກສິດ, **ຄພ** 25:11. ເພງຂອງຄົນຊອບທຳເປັນຄຳອະທິຖານຫາເຮົາ, ແລະ ຈະໄດ້ຮັບຄຳຕອບດ້ວຍພອນຢູ່ເທິງຫົວຂອງພວກເຂົາ, **ຄພ** 25:12. ຈົ່ງສັນລະເສີນພຣະຜູ້ເປັນເຈົ້າດ້ວຍການຮ້ອງເພງ ແລະ ດ້ວຍດົນຕີ, **ຄພ** 136:28.

**ແພດເຕັນ, ເດວິດ ດັບເບິນຢູ**

ສະມາຊິກໃນກຸ່ມອັກຄະສາວົກສິບສອງກຸ່ມທຳອິດ ທີ່ຖືກເລືອກໃນຍຸກສະໄໝຍຸກສຸດທ້າຍ. ເດວິດ ແພດເຕັນ ເປັນຜູ້ທຳອິດທີ່ຕາຍຍ້ອນຄວາມເຊື່ອ ຂອງສາດສະໜາຈັກທີ່ຖືກຟື້ນຟູຄືນມາໃໝ່, ໂດຍທີ່ຖືກຂ້າຢູ່ໃນການສູ້ຮົບທີ່ແມ່ນ້ຳຄຣຸກ ໃນລັດມີເຊີຣີ ໃນປີ 1838.

ໄດ້ຖືກຂໍຮ້ອງໃຫ້ເຮັດພາລະກິດຂອງລາວໃຫ້ຮຽບຮ້ອຍ ແລະ ເຮັດພາລະກິດຢ່າງໜຶ່ງ, **ຄພ** 114:1. ໄດ້ຖືກນຳໄປຫາພຣະຜູ້ເປັນເຈົ້າ, **ຄພ** 124:19, 130.

**ພົມມະຈັນ.** *ເບິ່ງ* ການລ່ວງປະເວນີ; ຄຸນນະທຳ; ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ຫລິ້ນຊູ້ *ນຳອີກ*

ຄວາມບໍລິສຸດທາງເພດຂອງຊາຍ ແລະ ຍິງ.

ໂຢເຊັບໄດ້ຕໍ່ຕ້ານການຊັກຊວນຂອງເມຍຂອງໂປຕີຟາ, **ປຖກ** 39:7–21 (ຄພ 42:24; 59:6). ຢ່າຫລິ້ນຊູ້, **ອພຍ** 20:14. ເມຍທີ່ດີນຳກຽດສັກສີມາສູ່ຜົວ, **ສພສ** 12:4 (ສພສ 31:10).

ເຈົ້າຮູ້ບໍວ່າ ຮ່າງກາຍຂອງເຈົ້າ ແມ່ນພຣະວິຫານຂອງພຣະວິນຍານບໍລິສຸດ, **1 ກຣທ** 6:18–19. ຈົ່ງເປັນແບບຢ່າງໃນຄວາມບໍລິສຸດຂອງເຈົ້າ, **1 ຕມທ** 4:12.

ບໍ່ມີສິ່ງໃດທີ່ເປິເປື້ອນຈະສາມາດອາໄສຢູ່ກັບພຣະເຈົ້າໄດ້, **1 ນຟ** 10:21. ເພາະເຮົາ, ອົງພຣະຜູ້ເປັນເຈົ້າ, ຊື່ນຊົມໃນພົມມະຈັນຂອງຜູ້ຍິງ, **ຢຄ** 2:28. ບາບຂອງການມະລົນທາງການຮ່ວມເພດເປັນສິ່ງໜ້າກຽດຊັງ, **ແອວ** 39:1–13. ພົມມະຈັນ ແລະ ຄຸນນະທຳເປັນທີ່ຮັກ ແລະ ມີຄ່າທີ່ສຸດເໜືອກວ່າທຸກສິ່ງ, **ມຣນ** 9:9.

ພວກເຮົາເຊື່ອໃນການເປັນຄົນບໍລິສຸດ, **ຫຼຊ** 1:13.

**ພໍ່, ມະຕະ.** *ເບິ່ງ* ຄອບຄົວ; ພໍ່ແມ່, ບິດາມານດາ; ປິຕຸ, ແຫ່ງປິຕຸ; ປິຕຸພອນ *ນຳອີກ*

ຕຳແໜ່ງສັກສິດທີ່ກ່າວເຖິງຜູ້ຊາຍຄົນໜຶ່ງຜູ້ໄດ້ມີ ຫລື ໄດ້ຮັບເດັກນ້ອຍຄົນໜຶ່ງມາລ້ຽງເປັນລູກຢ່າງຖືກຕ້ອງ

ຈົ່ງນັບຖືພໍ່ແມ່ຂອງເຈົ້າ, **ອພຍ** 20:12 (ພບຍ 5:16; ມທ 19:19; ມຊຍ 13:20). ພໍ່ຈະດັດແປງກໍ່ສ້າງລູກຜູ້ທີ່ຕົນພາກພູມໃຈນຳ, **ສພສ** 3:12.

ພໍ່ແມ່ຢ່າເຮັດໃຫ້ລູກຂອງຕົນຂັດເຄືອງໃຈ, **ອຟຊ** 6:1–4.

ຂ້າພະເຈົ້າໄດ້ຮັບການສິດສອນມາແດ່ແລ້ວໃນສິ່ງທີ່ຮຽນຮູ້ທັງໝົດຂອງບິດາຂອງຂ້າພະເຈົ້າ, **1 ນຟ** 1:1. ບິດາຂອງຂ້າພະເຈົ້າເປັນຄົນທ່ຽງທຳ—ເພາະເພິ່ນໄດ້ສິດສອນຂ້າພະເຈົ້າ, **ອນ** 1:1. ແອວມາໄດ້ອະທິຖານເພື່ອລູກຊາຍຂອງເພິ່ນ, **ມຊຍ** 27:14. ແອວມາໄດ້ໃຫ້ຄຳສັ່ງແກ່ພວກລູກຊາຍຂອງເພິ່ນ, **ແອວ** 36–42. ຮີລາມັນໄດ້ຕັ້ງຊື່ໃຫ້ພວກລູກຊາຍຂອງເພິ່ນ

ຕາມຊື່ຂອງບັນພະບຸລຸດຂອງເພິ່ນ, **ຮລມ** 5:5–12. ນໍມອນນຶກເຖິງລູກຊາຍຂອງເພິ່ນສະເໝີໃນຄຳອະທິຖານຂອງເພິ່ນ, **ມຣນ** 8:2–3.

ຄວາມຍິ່ງໃຫຍ່ຈະຖືກຮຽກຮ້ອງຈາກມືຂອງບັນພະບຸລຸດ, **ຄພ** 29:48. ທຸກໆຄົນໄດ້ຮັບໜ້າທີ່ໃຫ້ຈັດຫາໃຫ້ຄອບຄົວຂອງຕົນເອງ, **ຄພ** 75:28.

ເພິ່ນໄດ້ສັ່ງໃຫ້ຂ້າພະເຈົ້າໄປຫາພໍ່ຂອງຂ້າພະເຈົ້າ, **ຈສ—ປ** 1:49.

**ໄພ່ພົນຂອງພຣະເຈົ້າ.** *ເບິ່ງ* ສາດສະໜາຈັກຂອງພຣະເຢຊູຄຣິດ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ; ຊາວຄຣິດສະຕຽນ *ນຳອີກ*

ສະມາຊິກທີ່ຊື່ສັດຂອງສາດສະໜາຈັກຂອງພຣະເຢຊູຄຣິດ

ຈົ່ງທ້ອນໂຮມເອົາພວກຄົນສັດຊື່ຕໍ່ເຮົາ, **ພສສ** 50:5.

ໂຊໂລໄດ້ເຮັດຫລາຍສິ່ງທີ່ບໍ່ດີຕໍ່ໄພ່ພົນຂອງພຣະເຈົ້າ ທີ່ເຢຣູຊາເລັມ, **ກຈກ** 9:1–21. ເປໂຕກໍໄດ້ໄປຢ້ຽມຢາມໄພ່ພົນຂອງພຣະເຈົ້າ ທີ່ອາໄສຢູ່ເມືອງລິດດາ ຄືກັນ, **ກຈກ** 9:32. ພຣະຄຸນ ແລະ ສັນຕິສຸກ ແກ່ທຸກຄົນໃນນະຄອນໂຣມ ທີ່ເອີ້ນໃຫ້ເປັນໄພ່ພົນຂອງພຣະເຈົ້າ, **ຣມ** 1:7. ເຈົ້າທັງຫລາຍເປັນພົນລະເມືອງອັນດຽວກັນກັບພວກໄພ່ພົນຂອງພຣະເຈົ້າ, **ອຟຊ** 2:19–21.

ຂ້າພະເຈົ້າໄດ້ເຫັນສາດສະໜາຈັກຂອງພຣະເມສານ້ອຍ, ຜູ້ເປັນໄພ່ພົນຂອງພຣະເຈົ້າ, **1 ນຟ** 14:12. ມະນຸດທີ່ມີຈິດໃຈທຳມະດາເປັນສັດຕູກັບພຣະເຈົ້າ ເວັ້ນເສຍແຕ່ເຂົາຈະກາຍເປັນໄພ່ພົນຂອງພຣະເຈົ້າ ໂດຍການຊົດໃຊ້ຂອງພຣະຄຣິດ, **ມຊຢ** 3:19.

ເຮົາ, ພຣະຜູ້ເປັນເຈົ້າ, ໄດ້ໃຫ້ພອນແຜ່ນດິນ ເພື່ອຜົນປະໂຫຍດຂອງໄພ່ພົນຂອງເຮົາ, **ຄພ** 61:17. ຊາຕານເຮັດສົງຄາມກັບໄພ່ພົນຂອງພຣະເຈົ້າ, **ຄພ** 76:28–29. ຈົ່ງທຳງານຢ່າງພາກພຽນ ເພື່ອຕຽມໄພ່ພົນຂອງພຣະເຈົ້າໄວ້ ສຳລັບການພິພາກສາ ຊຶ່ງຈະມາເຖິງ, **ຄພ** 88:84–85. ໄພ່ພົນຂອງພຣະເຈົ້າຄວນແບ່ງປັນເຂົ້າຂອງ ຂອງພວກເຂົາໃຫ້ແກ່ຄົນຍາກຈົນ ແລະ ຄົນທີ່ເປັນທຸກ, **ຄພ** 105:3. ຕຳແໜ່ງທີ່ເຮົາໄດ້ມອບໃຫ້ ເພື່ອວຽກງານຂອງການປະຕິບັດສາດສະໜາກິດ ແລະ ການເຮັດໃຫ້ໄພ່ພົນຂອງເຮົາດີພ້ອມ, **ຄພ** 124:143 (ອຟຊ 4:12).

**ພວກໂຈນແກດີອານທັນ.** *ເບິ່ງ* ການມົ້ວສຸມລັບ *ນຳອີກ*

ໃນພຣະຄຳພີມໍມອນ, ພວກໂຈນທີ່ຕັ້ງຂຶ້ນໂດຍຊາວນີໄຟທີ່ຊົ່ວຮ້າຍຊື່ແກດີອານທັນ. ກຸ່ມຂອງພວກເຂົາແມ່ນຂຶ້ນກັບຄຳສາບານທີ່ເປັນຄວາມລັບ ແລະ ຜີມານຊາຕານ.

ແກດີອານທັນໄດ້ສ້າງຄວາມພິນາດໃຫ້ແກ່ປະຊາຊາດນີໄຟ, **ຮລມ** 2:12–13. ມານໄດ້ມອບຄຳສາບານ ແລະ ພັນທະສັນຍາລັບໃຫ້ແກ່ແກດີອານທັນ, **ຮລມ** 6:16–32. ການມົ້ວສຸມລັບໄດ້ນຳຄວາມພິນາດມາສູ່ປະຊາຊາດຢາເຣັດ, **ອທ** 8:15–26.

**ພວກຜູ້ປົກຄອງ, ພຣະທຳ**

ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມ. ພຣະທຳພວກຜູ້ປົກຄອງກ່ຽວຂ້ອງກັບຊາວອິດສະຣາເອນ ຈາກເວລາທີ່ໂຢຊວຍໄດ້ຕາຍໄປ ເຖິງການເກີດຂອງຊາມູເອນ.

ບົດທີ 1–3 ເປັນບົດຄຳນຳຂອງພຣະທຳພວກຜູ້ປົກຄອງທັງເຫລັ້ມ. ມັນອະທິບາຍວ່າເພາະຊາວອິດສະຣາເອນບໍ່ໄດ້ຂັບໄລ່ສັດຕູຂອງພວກເຂົາອອກໄປ (ຜປ 1:16–35), ຊາວອິດສະຣາເອນຈຶ່ງຕ້ອງຮັບທຸກທໍລະມານກັບຜົນທີ່ໄດ້ຮັບ: ການສູນເສຍສັດທາ, ການແຕ່ງງານກັບຄົນນອກສາດສະໜາ, ແລະ ການນັບຖືຮູບບູຊາ. ບົດທີ 4–5 ເລົ່າປະສົບການຂອງນາງເດໂບຣາ ແລະ ບາຣັກ, ຜູ້ໄດ້ປົດປ່ອຍຊາວອິດສະຣາເອນຈາກຊາວການາອານ. ບົດທີ 6–8 ເປັນປະສົບການທີ່ສົ່ງເສີມສັດທາຂອງກີເດໂອນ, ຜູ້ຊຶ່ງພຣະຜູ້ເປັນເຈົ້າອວຍພອນໃຫ້ປົດປ່ອຍອິດສະຣາເອນຈາກຊາວມີດີອານ. ໃນ ບົດທີ 9–12, ຜູ້ຊາຍຫລາຍຄົນທີ່ຮັບໃຊ້ເປັນຜູ້ຕັດສິນໃນອິດສະຣາເອນໃນໄລຍະເວລາທີ່ຊາວອິດສະຣາເອນສ່ວນ

ຫລາຍ ປະ ຖິ້ມ ຄວາມ ເຊື່ອ ແລະ ໄດ້ ຖືກ ປົກ ຄອງ ໂດຍຄົນຕ່າງຊາດ. ບົດທີ 13–16 ບອກ ເຖິງ ຄວາມກ້າວໜ້າ ແລະ ການ ຕົກ ຂອງ ຜູ້ ຕັດສິນຄົນສຸດທ້າຍຊື່ ແຊມຊັນ. ບົດທີ, 17–21 ສຸດທ້າຍ, ສາມາດບັນຍາຍວ່າເປັນພາກ ທ້ອຍທ້າຍ ທີ່ເປີດເຜີຍບາບອັນຮ້າຍແຮງຂອງ ອິດສະຣາເອນ.

**ຟາຣາໂອ.** *ເບິ່ງ* ເອຢິບ; ເອຢິບໂຕ *ນຳອີກ*

ລູກຊາຍກົກຂອງເອຢິບໂຕ, ລູກສາວຂອງ ຮາມ (ອຣຮ 1:25). ພ້ອມນີ້, ກໍຍັງເປັນຕຳແໜ່ງ ທີ່ມອບໃຫ້ແກ່ກະສັດຂອງຊາວເອຢິບນຳອີກ (ອຣຮ 1:27).

**ຟາຣີຊາຍ.** *ເບິ່ງ* ຊາວຢິວ *ນຳອີກ*

ໃນພຣະຄຳພີໃໝ່, ກຸ່ມສາດສະໜາໃນບັນ ດາຊາວຢິວ ຊຶ່ງຊື່ນີ້ບອກເຖິງການຢູ່ຫ່າງ ຫລື ແຍກຕົວ. ພວກຟາຣີຊາຍພູມໃຈກັບຕົນເອງ ຫລາຍ ເລື່ອງການຮັກສາກົດຂອງໂມເຊຢ່າງ ເຄັ່ງຄັດ ແລະ ຫລີກເວັ້ນຈາກການສຳພັນກັບ ຄົນຕ່າງຊາດ. ພວກເຂົາເຊື່ອໃນຊີວິດຫລັງ ຈາກຄວາມຕາຍ, ການຟື້ນຄືນຊີວິດ, ແລະ ການເປັນຢູ່ຂອງເຫລົ່າທູດ ແລະ ວິນຍານ. ພວກເຂົາເຊື່ອວ່າ ກົດທາງວາຈາ ແລະ ຮີດ ຄອງປະເພນີກໍມີຄວາມສຳຄັນເທົ່າໆກັບກົດທີ່ ມີຂຽນໄວ້. ຄຳສອນຂອງພວກເຂົາໄດ້ຜ່ອນຜັນ ສາດສະໜາລົງມາເປັນການຮັກສາກົດ ແລະ ຊຸກຍູ້ຄວາມຈອງຫອງທາງວິນຍານ. ພວກເຂົາ ເຮັດໃຫ້ຊາວຢິວຫລາຍຄົນເກີດຄວາມສົງໄສ ພຣະຄຣິດ ແລະ ພຣະກິດຕິຄຸນຂອງພຣະອົງ. ພຣະຜູ້ເປັນເຈົ້າໄດ້ປະນາມພວກຟາຣີຊາຍ ແລະ ວຽກງານຂອງພວກເຂົາ ໃນ ມັດທາຍ 23; ມາຣະໂກ 7:1–23; ແລະ ລູກາ 11:37–44.

**ຟີລິດສະຕິນ**

ໃນພຣະຄຳພີເດີມ, ເຜົ່າໜຶ່ງທີ່ດັ້ງເດີມມາ ຈາກເກາະກາຟະໂຕ (ອມ 9:7) ແລະ ໄດ້ມາ ຕັ້ງຖິ່ນຖານຢູ່ໃນດິນແດນທີ່ອຸດົມສົມບູນ ຢູ່ ບ່ອນລຸ່ມຕາມຝັ່ງແມ່ນ້ຳເມດີແຕຣາເນ ຈາກ ຢົບປາ ເຖິງ ທະເລຊາຍຂອງປະເທດເອຢິບ ກ່ອນສະໄໝຂອງອັບຣາຮາມ (ປຖກ 21:32). ເປັນເວລາຫລາຍປີທີ່ມີສົງຄາມລະຫວ່າງຊາວ ຟີລິດສະຕິນ ແລະ ຊາວອິດສະຣາເອນ. ໃນທີ່ ສຸດ ຟີລິດສະຕິນ, ຊື່ຂອງອະນາເຂດຂອງຟີລິດ ສະຕິນ, ໄດ້ກາຍເປັນຊື່ທີ່ຮູ້ຈັກກັນດີ ສຳລັບ ແຜ່ນດິນທີ່ສັກສິດທັງໝົດ.

ຊາວອິດສະຣາເອນໄດ້ຕົກເປັນທາດຂອງ ຊາວຟີລິດສະຕິນເປັນເວລາສີ່ສິບປີ, **ຜປ** 13:1. ແຊມຊັນໄດ້ຕໍ່ສູ້ຊາວຟີລິດສະຕິນ, **ຜປ** 13–16. ໂກລີອາດເປັນຊາວຟີລິດສະຕິນແຫ່ງກາດ, **1 ຊມອ** 17. ດາວິດໄດ້ເອົາຊະນະຊາວຟີລິດ ສະຕິນ, **1 ຊມອ** 19:8.

**ຟີລິບ**

ໃນພຣະຄຳພີໃໝ່, ຟີລິບ, ແຫ່ງເມືອງເບັດ ຊາອີດາ, ເປັນຜູ້ໜຶ່ງໃນບັນດາອັກຄະສາວົກ ສິບສອງຄົນຂອງພຣະຜູ້ຊ່ວຍໃຫ້ລອດ (ມທ 10:2–4; ຢຮ 1:43–45).

ຟີລິບອີກຄົນໜຶ່ງ ເປັນຜູ້ໜຶ່ງໃນເຈັດຄົນທີ່ ຖືກເລືອກໃຫ້ຮັບໃຊ້ອັກຄະສາວົກສິບສອງ (ກຈກ 6:2–6). ລາວໄດ້ສັ່ງສອນໃນຊາມາ ເຣຍ ແລະ ແກ່ຂ້າຣາຊການຊາວເອທິໂອເປຍ (ກຈກ 8).

**ຟີເລໂມນ.** *ເບິ່ງ* ໂປໂລ *ນຳອີກ*

ຊາຍຊາວຄຣິດສະຕຽນຢູ່ໃນພຣະຄຳພີໃໝ່ ຜູ້ເປັນເຈົ້າຂອງຂ້າທາດຄົນໜຶ່ງຊື່ ໂອເນຊີໂມ, ຜູ້ໄດ້ໜີໄປ ແລະ ເຂົ້າຮ່ວມກັບໂປໂລ. ໂປໂລ ໄດ້ສົ່ງໂອເນຊີໂມກັບໄປຫາຟີເລໂມນພ້ອມ ດ້ວຍຈົດໝາຍ ຂໍໃຫ້ຟີເລໂມນອະໄພໃຫ້ຂ້າ ທາດຂອງລາວ.

**ຟີເລໂມນ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໜັງ ສື ໃນ ພຣະ ຄຳ ພີ ໃໝ່, ເອົາ ມາ ຈາກ ການຂຽນຂອງໂປໂລ. ຈົດໝາຍຂອງໂປໂລ ເຖິງ ຟີເລໂມນ ເປັນຈົດໝາຍສ່ວນຕົວກ່ຽວ ກັບໂອເນຊີໂມ, ຂ້າທາດຜູ້ໄດ້ຂະໂມຍຈາກ ຟີເລໂມນເຈົ້ານາຍຂອງລາວ, ແລະ ໄດ້ໜີໄປ ກຸງໂຣມ. ໂປໂລໄດ້ສົ່ງລາວກັບໄປຫາເຈົ້ານາຍ ຂອງລາວຢູ່ໂກໂລຊາຍ ພ້ອມກັບຕີຂີໂກ, ຜູ້ຈະ

ເອົາຈົດໝາຍຂອງໂປໂລໄປເມືອງໂກໂລຊາຍ. ໂປໂລໄດ້ຂໍໃຫ້ໂອເນຊີໂມໄດ້ຮັບການອະໄພໂທດ ແລະ ຖືກຮັບເອົາຄືນໃນຖານະເພື່ອນຊາວຄຣິດສະຕຽນ. ໂປໂລໄດ້ຂຽນຈົດໝາຍສະບັບນີ້ ໃນຂະນະທີ່ລາວຢູ່ໃນຄຸກຢູ່ກຸງໂຣມເປັນເທື່ອທຳອິດ.

**ແຟ້ວສ໌, ວິວລຽມ ດັບເບີນຢູ**

ສະມາຊິກ ໃນ ລຸ້ນທຳອິດໃນສາດ ສະໜາຈັກ ຫລັງຈາກມັນໄດ້ຖືກຟື້ນຟູຄືນມາໃໝ່ ໃນປີ 1830. ພຣະຜູ້ເປັນເຈົ້າໄດ້ເອີ້ນ ວິວລຽມ ແຟ້ວສ໌ ໃຫ້ເປັນນັກພິມສຳລັບສາດສະໜາຈັກ (ຄພ 57:11; 58:40; 70:1).

**ໄຟ.** *ເບິ່ງ* ນະລົກ; ບັບຕິສະມາ, ໃຫ້ບັບຕິສະມາ; ແຜ່ນດິນໂລກ—ການຊຳລະລ້າງແຜ່ນດິນໂລກ; ພຣະວິນຍານບໍລິສຸດ *ບຳອິກ*

ສັນ ຍາ ລັກສຳລັບການຊຳລະລ້າງ, ການເຮັດໃຫ້ສະອາດ, ຫລື ການເຮັດໃຫ້ບໍລິສຸດ. ໄຟກໍສາມາດໃຊ້ເປັນສັນຍາລັກເຖິງທີ່ປະທັບຂອງພຣະເຈົ້າໄດ້ຄືກັນ.

ພຣະເຈົ້າຂອງພວກເຈົ້າເປັນດັ່ງໄຟທີ່ເຜົາຜານ, **ພບຍ** 4:24. ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ແສງຟ້າແມບເຫລື້ອມເປັນຜູ້ຮັບໃຊ້, **ພສສ** 104:4. ຈອມໂຍທາຈະຊ່ວຍກູ້ເອົາພວກເຂົາດ້ວຍແປວໄຟອັນແກ່ກ້າ, **ອຊຢ** 29:6 (2 ນຟ 27:2). ພຣະຜູ້ເປັນເຈົ້າຈະສະເດັດມາພ້ອມກັບໄຟ, **ອຊຢ** 66:15. ພຣະອົງເປັນດັ່ງໄຟທີ່ຫລອມໂລຫະ, **ມລກ** 3:2 (3 ນຟ 24:2; ຄພ 128:24).

ເພິ່ນຈະໃຫ້ພວກເຈົ້າຮັບບັບຕິສະມາດ້ວຍພຣະວິນຍານບໍລິສຸດ, ແລະ ດ້ວຍໄຟ, **ມທ** 3:11 (ລກ 3:16).

ຄົນຊອບທຳຈະໄດ້ຮັບການຮັກສາດ້ວຍໄຟ, **1 ນຟ** 22:17. ຄົນຊົ່ວຈະຖືກທຳລາຍດ້ວຍໄຟ, **2 ນຟ** 30:10. ນີໄຟໄດ້ອະທິບາຍເຖິງວິທີທີ່ເຮົາຮັບບັບຕິສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດ, **2 ນຟ** 31:13–14 (3 ນຟ 9:20; 12:1; 19:13; ອທ 12:14; ຄພ 33:11).

ເຈົ້າຈົ່ງປະກາດການປົດບາບໂດຍການບັບຕິສະມາ, ແລະ ໂດຍໄຟ, **ຄພ** 19:31. ສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງ ຈະຖືກໂຄ່ນລົ້ມລົງດ້ວຍໄຟເຜົາຜານ, **ຄພ** 29:21. ແຜ່ນດິນໂລກຈະສູນສິ້ນໄປເໝືອນດັ່ງດ້ວຍໄຟ, **ຄພ** 43:32. ທີ່ປະທັບຂອງພຣະຜູ້ເປັນເຈົ້າຈະເປັນຄືກັນກັບໄຟຫລໍ່ຫລອມ, **ຄພ** 133:41.

ອາດາມໄດ້ຮັບບັບຕິສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດ, **ມຊ** 6:66.

**ມະຕະ, ຄວາມເປັນມະຕະ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ຄວາມຕາຍທາງຮ່າງກາຍ; ໂລກ; ຮ່າງກາຍ *ບຳອິກ*

ເວລາຈາກຕອນເກີດ ຈົນເຖິງເວລາຕາຍທາງຮ່າງກາຍ. ສິ່ງນີ້ບາງເທື່ອຖືກເອີ້ນວ່າສະພາວະທີສອງ.

ຖ້າ ເຈົ້າ ຂືນກິນເມື່ອໃດ ເຈົ້າຈະຕາຍເມື່ອນັ້ນ, **ປຖກ** 2:16–17 (ມຊ 3:16–17). ຮ່າງກາຍຂອງພວກເຮົາຈະກັບເປັນຂີ້ຝຸ່ນດິນອີກ ແລະ ຈິດວິນຍານຂອງພວກເຮົາກໍຈະກັບຄືນໄປຫາພຣະເຈົ້າ, **ປຍຈ** 12:7 (ປຖກ 3:19; ມຊ 4:25).

ຢ່າໃຫ້ຄວາມຜິດບາບໄດ້ປົກຄອງຮ່າງກາຍທີ່ຕ້ອງຕາຍຂອງພວກເຈົ້າອີກຕໍ່ໄປ, **ຣມ** 6:12. ສິ່ງທີ່ຕາຍເປັນຕ້ອງຖືກປ່ຽນແປງສູ່ສິ່ງທີ່ຕາຍບໍ່ເປັນ, **1 ກຣທ** 15:53 (ອນ 1:27; ມຊຢ 16:10; ມມ 6:21).

ສະພາບ ຂອງ ມະນຸດກາຍເປັນສະພາວະແຫ່ງການທົດລອງ, **2 ນຟ** 2:21 (ແອວ 12:24; 42:10). ອາດາມຕົກເພື່ອມະນຸດຈະໄດ້ເປັນຢູ່, **2 ນຟ** 2:25. ພວກທ່ານໄດ້ຄອຍຖ້າເບິ່ງຮ່າງກາຍທີ່ເປັນມະຕະນີ້ຖືກຍົກຂຶ້ນໄປຫາຄວາມເປັນອະມະຕະບໍ, **ແອວ** 5:15. ຊີວິດນີ້ເປັນເວລາທີ່ຈະຕຽມພ້ອມເພື່ອພົບກັບພຣະເຈົ້າ, **ແອວ** 34:32.

ຢ່າສູ້ຢ້ານຄວາມຕາຍ, ເພາະຄວາມສຸກຂອງພວກເຈົ້າບໍ່ບໍລິບູນໃນໂລກນີ້, **ຄພ** 101:36.

ຜູ້ທີ່ຮັກສາສະພາວະທີສອງຂອງເຂົາ ຈະມີລັດສະໝີພາບ, **ອຣຮ** 3:26.

**ມະນຸດ.** *ເບິ່ງ* ການສ້າງວິນຍານ; ບຸດ ແລະ ທິດາຂອງພຣະເຈົ້າ; ຜູ້ຍິງ, ກຸ່ມຜູ້ຍິງ; ພຣະ

ເຈົ້າ, ຝ່າຍພຣະເຈົ້າ; ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ; ວິນຍານ; ເອື້ອຍນ້ອງ *ນຳອີກ*

ອ້າງເຖິງມະນຸດຊາດທັງປວງ, ທັງຊາຍ ແລະ ຍິງທຸກຄົນ. ຊາຍ ແລະ ຍິງທັງປວງເປັນລູກທາງວິນຍານຂອງພຣະບິດາເທິງສະຫວັນ. ເມື່ອພວກເຂົາໄດ້ມາເກີດຢູ່ໃນໂລກມະຕະ, ພວກເຂົາໄດ້ຮັບຮ່າງກາຍທີ່ເປັນມະຕະ. ຮ່າງກາຍເຫລົ່ານີ້ໄດ້ຖືກສ້າງຂຶ້ນຕາມຮູບຮ່າງລັກສະນະຂອງພຣະເຈົ້າ. (ປຖກ 1:26–27). ຊາຍ ແລະ ຍິງ ຜູ້ຊື່ສັດໃນການຮັບເອົາພິທີການທີ່ຈຳເປັນ, ຮັກສາພັນທະສັນຍາຂອງພວກເຂົາ, ແລະ ເຊື່ອຟັງພຣະບັນຍັດຂອງພຣະເຈົ້າ ຈະໄດ້ເຂົ້າໄປໃນຄວາມສູງສົ່ງຂອງພວກເຂົາ ແລະ ກາຍເປັນເໝືອນດັ່ງພຣະເຈົ້າ.

ພຣະເຈົ້າໄດ້ສ້າງມະນຸດໃຫ້ຄ້າຍຄືພຣະອົງ, **ປຖກ** 1:27 (ມຊຢ 7:27; ຄພ 20:17–18). ມະນຸດສຳຄັນຫຍັງແດ່ທີ່ພຣະອົງຕ້ອງຄິດເຖິງພວກເຂົາ, **ພສສ** 8:4–5. ເຮົາຈະປະນາມຜູ້ທີ່ວາງໃຈໃນກຳລັງຂອງຄົນທີ່ຕາຍເປັນນັ້ນ, **ຢມຢ** 17:5 (2 ນຟ 4:34; 28:26, 31).

ເມື່ອເຮົາກາຍເປັນຜູ້ໃຫຍ່ແລ້ວ, ເຮົາກໍເລີກຄວາມປະພຶດຢ່າງເດັກນ້ອຍນັ້ນເສຍ, **1 ກຣທ** 13:11.

ມະນຸດ ເປັນຢູ່ກໍເພື່ອພວກເຂົາຈະໄດ້ມີຄວາມສຸກ, **2 ນຟ** 2:25. ມະນຸດທີ່ມີຈິດໃຈທຳມະດາເປັນສັດຕູຂອງພຣະເຈົ້າ, **ມຊຢ** 3:19. ເຈົ້າຄວນເປັນຄົນແນວໃດ, **3 ນຟ** 27:27.

ວຽກງານຂອງມະນຸດຈະລົ້ມເຫລວ, ແຕ່ບໍ່ແມ່ນວຽກງານຂອງພຣະເຈົ້າ, **ຄພ** 3:3. ເຈົ້າບໍ່ຄວນຢ້ານກົວມະນຸດຫລາຍກວ່າພຣະເຈົ້າ, **ຄພ** 3:7 (ຄພ 30:11; 122:9). ທຸກສິ່ງໄດ້ເກີດຂຶ້ນເພື່ອເປັນປະໂຫຍດ ແລະ ເພື່ອການໃຊ້ສອຍຂອງມະນຸດ, **ຄພ** 59:18.

ຂ້າພະເຈົ້າຈຶ່ງຮູ້ວ່າ ມະນຸດບໍ່ໄດ້ເປັນອັນໃດເລີຍ, **ມຊ** 1:10. ວຽກງານ ແລະ ລັດສະໝີພາບຂອງພຣະເຈົ້າ ຄືການທີ່ຈະເຮັດໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39.

*ມະນຸດ, ລູກທາງວິນຍານຂອງພຣະບິດາເທິງສະຫວັນ:* ເຂົາເຈົ້າໄດ້ຂາບລົງດິນທູນວ່າ, ໂອ້ ພຣະອົງເຈົ້າເອີຍ, ພຣະອົງເປັນຜູ້ໃຫ້ຊີວິດແກ່ຄົນທັງປວງ, **ຈບຊ** 16:22 (ຈບຊ 27:16). ພວກເຈົ້າເປັນປະຊາຊົນຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ, **ພບຍ** 14:1. ພວກເຈົ້າຄືບັນດາພຣະ ແລະ ທຸກຄົນເປັນພວກລູກຂອງອົງສູງສຸດ, **ພສສ** 82:6. ໝູ່ເຈົ້າເປັນລູກຂອງພຣະເຈົ້າອົງຊົງຊີວິດຢູ່, **ຮສອ** 1:10. ພວກເຮົາທຸກຄົນມີພຣະບິດາອົງດຽວກັນບໍ່ແມ່ນບໍ? ບໍ່ແມ່ນພຣະເຈົ້າອົງດຽວກັນບໍທີ່ສ້າງພວກເຮົາທຸກຄົນ, **ມລກ** 2:10.

ພວກເຮົາເປັນເຊື້ອສາຍຂອງພຣະເຈົ້າ, **ກຈກ** 17:29. ພຣະວິນຍານເປັນພະຍານວ່າພວກເຮົາເປັນລູກຂອງພຣະເຈົ້າ, **ຣມ** 8:16. ພວກເຮົາຄວນຢູ່ໃຕ້ບັງຄັບຂອງພຣະບິດາເຈົ້າແຫ່ງບັນດາວິນຍານຈິດ, **ຮຣ** 12:9.

ວິນຍານຂອງມະນຸດທຸກຄົນ ຍ່ອມຖືກນຳກັບບ້ານໄປຫາພຣະເຈົ້າຜູ້ປະທານຊີວິດໃຫ້ແກ່ເຂົາ, **ແອວ** 40:11.

ຜູ້ອາໄສຂອງໂລກເປັນບຸດ ແລະ ທິດາທີ່ຖືກຳເນີດຂອງພຣະເຈົ້າ, **ຄພ** 76:24. ໃນຕອນຕົ້ນມະນຸດໄດ້ຢູ່ນຳພຣະເຈົ້າ, **ຄພ** 93:23, 29.

ພຣະເຈົ້າໄດ້ສ້າງມະນຸດທັງປວງທາງວິນຍານ ກ່ອນເຂົາໄດ້ເປັນຢູ່ເທິງພື້ນແຜ່ນດິນໂລກ, **ມຊ** 3:5–7. ເຮົາຄື ພຣະເຈົ້າ; ເຮົາໄດ້ສ້າງໂລກ, ແລະ ມະນຸດກ່ອນພວກເຂົາເປັນຢູ່ໃນເນື້ອໜັງ, **ມຊ** 6:51.

*ມະນຸດ, ສັກກະຍະພາບທີ່ຈະກາຍເປັນເໝືອນດັ່ງພຣະບິດາເທິງສະຫວັນ:* ເຈົ້າທັງຫລາຍຕ້ອງເປັນຄົນດີທີ່ສຸດ ເໝືອນຢ່າງພຣະບິດາຂອງເຈົ້າ, **ມທ** 5:48 (3 ນຟ 12:48). ມີຄຳຂຽນໄວ້ໃນກົດບັນຍັດຂອງພວກເຈົ້າບໍ່ແມ່ນບໍວ່າ ເຈົ້າທັງຫລາຍເປັນພຣະ, **ຢຮ** 10:34 (ຄພ 76:58). ເຮົາເປັນຜູ້ຮັບມໍລະດົກຈາກພຣະເຈົ້າ ແລະ ເປັນຜູ້ຮ່ວມຮັບມໍລະດົກກັບພຣະຄຣິດ, **ຣມ** 8:17. ພວກເຈົ້າເປັນບຸດ ແລະ ຖ້າເປັນບຸດແລ້ວ ກໍເປັນເຈົ້າຂອງມໍລະດົກຂອງພຣະເຈົ້າຜ່ານທາງພຣະຄຣິດ, **ຄລຕ** 4:7. ເມື່ອພຣະອົງຈະສະເດັດມາປະກົດ, ເຮົາທັງຫລາຍຈະເປັນເໝືອນພຣະອົງ, **1 ຢຮ** 3:2. ຜູ້ທີ່ໄຊຊະນະ ເຮົາຈະໃຫ້ຜູ້ນັ້ນນັ່ງກັບເຮົາເທິງບັນລັງຂອງເຮົາ, **ພນມ** 3:21.

ເຮົາຈະໃຫ້ພວກເຂົາກາຍມາເປັນບຸດຂອງພຣະເຈົ້າ, **3 ນຟ** 9:17.

ຜູ້ທີ່ໄດ້ຮັບອານາຈັກຊັ້ນສູງເປັນນໍລະດົກຄືຜູ້ທີ່ເປັນພຣະເຈົ້າ, ແມ່ນແຕ່ເປັນບຸດຂອງພຣະເຈົ້າ, **ຄພ** 76:50, 58. ເມື່ອນັ້ນພວກເຂົາຈະກາຍເປັນພຣະເຈົ້າ, ເພາະວ່າພວກເຂົາມີອຳນາດທັງປວງ, **ຄພ** 132:20.

**ມະນຸດທີ່ມີຈິດໃຈທຳມະດາ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ການມະລົນ; ເກີດໃໝ່, ເກີດຈາກພຣະເຈົ້າ *ນຳອີກ*

ບຸກຄົນທີ່ເລືອກໃຫ້ກິເລດຕັນຫາ, ຄວາມປາດຖະໜາ, ຄວາມຢາກ, ແລະ ຄວາມຮູ້ສຶກຂອງເນື້ອໜັງມີອິດທິພົນເໜືອຕົນ ແທນການກະຕຸ້ນຂອງພຣະວິນຍານທີ່ສັກສິດ. ບຸກຄົນເຊັ່ນນັ້ນສາມາດເຂົ້າໃຈສິ່ງທີ່ເປັນທາງຮ່າງກາຍ ແຕ່ບໍ່ແມ່ນສິ່ງທີ່ເປັນທາງວິນຍານ. ທຸກຄົນມີການມະລົນ, ຫລື ມະຕະ, ເພາະວ່າການຕົກຂອງອາດາມ ແລະ ເອວາ. ແຕ່ລະຄົນຕ້ອງເກີດໃໝ່ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດເພື່ອຈະໄດ້ປະຖິ້ມມະນຸດທີ່ມີຈິດໃຈທຳມະດາ.

ມະນຸດທີ່ມີຈິດໃຈທຳມະດາຈະຮັບສິ່ງທີ່ເປັນຂອງພຣະວິນຍານກໍບໍ່ໄດ້, **1 ກຣທ** 2:14.

ມະນຸດທີ່ມີຈິດໃຈທຳມະດາເປັນສັດຕູຂອງພຣະເຈົ້າ ແລະ ຄວນປະຖິ້ມ, **ມຊຢ** 3:19. ຜູ້ໃດທີ່ຍັງຄົງຢູ່ໃນສະພາບແຫ່ງການມະລົນຂອງຕົນເອງ ຈະຍັງຄົງຢູ່ໃນສະພາບຕົກຕ່ຳຂອງຕົນ, **ມຊຢ** 16:5 (ແອວ 42:7–24; ຄພ 20:20). ມີມະນຸດທີ່ມີຈິດໃຈທຳມະດາຜູ້ໃດທີ່ຈະຮູ້ຈັກເລື່ອງເຫລົ່ານີ້, **ແອວ** 26:19–22. ມະນຸດທີ່ມີຈິດໃຈທຳມະດາ ແລະ ມີການມະລົນ ຢູ່ໃນໂລກໂດຍບໍ່ມີພຣະເຈົ້າ, **ແອວ** 41:11.

ເພາະການລ່ວງລະເມີດຂອງເຂົາ, ມະນຸດຈຶ່ງຕາຍທາງວິນຍານ, **ຄພ** 29:41. ທັງບໍ່ມີມະນຸດທີ່ມີຈິດໃຈທຳມະດາຄົນໃດສາມາດທົນຢູ່ຕໍ່ໜ້າທີ່ປະທັບຂອງພຣະເຈົ້າໄດ້, **ຄພ** 67:12.

ມະນຸດໄດ້ເລີ່ມມີການມະລົນ, ຕັນຫາໜ້າມືດ, ແລະ ຕ່ຳຊ້າ, **ມຊ** 5:13 (ມຊ 6:49).

**ມະຫັດສະຈັນ, ການມະຫັດສະຈັນ.** *ເບິ່ງ* ເຄື່ອງໝາຍ; ສັດທາ *ນຳອີກ*

ເຫດການພິເສດທີ່ເກີດຂຶ້ນໂດຍອຳນາດຂອງພຣະເຈົ້າ. ສິ່ງມະຫັດສະຈັນເປັນສ່ວນປະກອບທີ່ສຳຄັນໃນວຽກງານຂອງພຣະເຢຊູຄຣິດ. ມັນລວມທັງການປິ່ນປົວ, ການນຳຄົນຕາຍຄືນມາມີຊີວິດອີກ, ແລະ ການຟື້ນຄືນຊີວິດ. ສິ່ງມະຫັດສະຈັນເປັນພາກສ່ວນໜຶ່ງຂອງພຣະກິດຕິຄຸນຂອງພຣະເຢຊູຄຣິດ. ສັດທາເປັນສິ່ງຈຳເປັນຫລາຍ ກ່ອນສິ່ງມະຫັດສະຈັນຈະສະແດງໃຫ້ປະຈັກ (ມຣກ 6:5–6; ມມ 9:10–20; ອທ 12:12).

ເມື່ອຟາລາໂອກ່າວ, ໃຫ້ສະແດງສິ່ງມະຫັດສະຈັນ, **ອພຍ** 7:9.

ບໍ່ມີຜູ້ໃດທີ່ເຮັດສິ່ງມະຫັດສະຈັນໃນນາມຂອງເຮົາ ແລະ ພາຍຫລັງມາຈະກັບມາເວົ້າໝິ່ນປະໝາດເຮົາ, **ມຣກ** 9:39. ບ້ານການາເປັນບ່ອນທີ່ພຣະເຢຊູໄດ້ເຮັດສິ່ງມະຫັດສະຈັນເທື່ອທຳອິດຂອງພຣະອົງ, **ຢຮ** 2:11.

ເຮົາຄືພຣະເຈົ້າແຫ່ງສິ່ງມະຫັດສະຈັນ, **2 ນຟ** 27:23. ອຳນາດຂອງພຣະເຈົ້າເຮັດສິ່ງມະຫັດສະຈັນ, **ແອວ** 23:6. ພຣະຄຣິດສາມາດເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ ແກ່ຜູ້ຄົນທີ່ຢູ່ໃນທະວີບອາເມຣິກາ ເພາະພວກເຂົາມີສັດທາອັນຍິ່ງໃຫຍ່, **3 ນຟ** 19:35. ພຣະເຈົ້າຍັງບໍ່ໄດ້ເລີກເປັນພຣະເຈົ້າແຫ່ງສິ່ງມະຫັດສະຈັນ, **ມມ** 9:15.

ຢ່າຮຽກຮ້ອງສິ່ງມະຫັດສະຈັນ, ຍົກເວັ້ນແຕ່ພຣະຜູ້ເປັນເຈົ້າຈະບັນຊາເຈົ້າ, **ຄພ** 24:13–14. ແກ່ບາງຄົນມັນຖືກມອບໃຫ້ເພື່ອເຮັດວຽກງານແຫ່ງການມະຫັດສະຈັນ, **ຄພ** 46:21 (ມຣນ 10:12).

**ມະຫາປະໂລຫິດ.** *ເບິ່ງ* ຖານະປະໂລຫິດແຫ່ງເມນຄີເສເດັກ; ຖານະປະໂລຫິດແຫ່ງອາໂຣນ *ນຳອີກ*

ຕຳແໜ່ງໜຶ່ງໃນຖານະປະໂລຫິດ. ພຣະຄຳພີກ່າວເຖິງ "ມະຫາປະໂລຫິດ" ໃນຄວາມໝາຍສອງຢ່າງ: (1) ຕຳແໜ່ງໃນຖານະປະໂລຫິດແຫ່ງເມນຄີເສເດັກ; ແລະ (2) ພາຍໃຕ້ກົດ

ຂອງໂມເຊ, ເຈົ້າໜ້າທີ່ຄວບຄຸມ ຖານະປະໂລຫິດແຫ່ງອາໂຣນ.

ຄວາມໝາຍທຳອິດໝາຍເຖິງພຣະເຢຊູຄຣິດໃນຖານະມະຫາປະໂລຫິດທີ່ຍິ່ງໃຫຍ່. ອາດາມ ແລະ ປິຕຸທຸກຄົນກໍໄດ້ເປັນມະຫາປະໂລຫິດຄືກັນ. ທຸກວັນນີ້, ມະຫາປະໂລຫິດສາມຄົນຕັ້ງເປັນຝ່າຍປະທານສູງສຸດຂອງສາດສະໜາຈັກ ແລະ ຄວບຄຸມຜູ້ດຳລົງຖານະປະໂລຫິດ ແລະ ສະມາຊິກຂອງສາດສະໜາຈັກທັງໝົດ. ມີຜູ້ຊາຍທີ່ມີຄ່າຄວນຫລາຍຄົນຕື່ມອີກທີ່ໄດ້ຖືກແຕ່ງຕັ້ງຕໍ່ມະຫາປະໂລຫິດຕາມທີ່ເຫັນວ່າເໝາະສົມ ຕະຫລອດທົ່ວສາດສະໜາຈັກໃນທຸກວັນນີ້. ມະຫາປະໂລຫິດອາດຖືກເອີ້ນ, ແຕ່ງຕັ້ງເປັນທາງການ, ແລະ ແຕ່ງຕັ້ງໃຫ້ເປັນອະທິການກໍໄດ້ (ຄພ 68:19; 107:69–71).

ໃນຄວາມໝາຍຢ່າງທີສອງ, ພາຍໃຕ້ກົດຂອງໂມເຊ, ເຈົ້າໜ້າທີ່ຄວບຄຸມຖານະປະໂລຫິດແຫ່ງອາໂຣນ ໄດ້ຖືກເອີ້ນວ່າ ມະຫາປະໂລຫິດ. ຕຳແໜ່ງນີ້ແມ່ນສືບຕໍ່ຈາກພໍ່ຫາລູກ ແລະ ຜ່ານລູກຊາຍກົກໃນຄອບຄົວຂອງອາໂຣນ, ອາໂຣນເອງໄດ້ເປັນມະຫາປະໂລຫິດຄົນທຳອິດໃນຖານະປະໂລຫິດແຫ່ງອາໂຣນ (ອພຍ 28–29; ລລວ 8; ຄພ 84:18).

ເມນຄີເສເດັກເປັນປະໂລຫິດຂອງພຣະເຈົ້າອົງສູງສຸດ, **ປຖກ** 14:18 (ແອວ 13:14).

ມະຫາປະໂລຫິດໄດ້ຖືກເອີ້ນ ແລະ ຖືກຕຽມໄວ້ນັບຕັ້ງແຕ່ການວາງຮາກຖານຂອງໂລກ, **ແອວ** 13:1–10.

ມະຫາປະໂລຫິດປະຕິບັດໃນເລື່ອງທາງວິນຍານ, **ຄພ** 107:10, 12, 17.

**ມັກຄະນາຍົກ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ *ບຳອີກ*

ການເອີ້ນໃນການຮັບໃຊ້ຂອງສາດສະໜາຈັກໃນວັນເວລາຂອງອັກຄະສາວົກໂປໂລ (ຟລປ 1:1; 1 ຕມທ 3:8–13) ແລະ ໜ້າທີ່ໃນຖານະປະໂລຫິດແຫ່ງອາໂຣນ (ຄພ 20:38, 57–59; 84:30, 111; 107:85).

**ມັດທາຍ.** *ເບິ່ງ* ພຣະທຳ *ບຳອີກ*

ອັກຄະສາວົກຄົນໜຶ່ງຂອງພຣະເຢຊູຄຣິດ ແລະ ຜູ້ຂຽນໜັງສືເຫລັ້ມທຳອິດໃນພຣະຄຳພີໃໝ່. ມັດທາຍ, ຊາວຢິວຜູ້ເປັນຄົນເກັບພາສີໃຫ້ຊາວໂຣມທີ່ເມືອງກາເປນາອູມ, ບາງທີເຄີຍໄດ້ຮັບໃຊ້ເຮໂຣດ ອັນຕິປາ. ກ່ອນລາວປ່ຽນໃຈເຫລື້ອມໃສ ລາວເປັນທີ່ຮູ້ຈັກກັນວ່າເລວີ, ລູກຊາຍຂອງອາລະຟາຍ (ມຣກ 2:14). ບໍ່ດົນຫລັງຈາກການເອີ້ນຂອງລາວໃຫ້ເປັນສານຸສິດຂອງພຣະເຢຊູ, ລາວໄດ້ຈັດງານລ້ຽງຂຶ້ນ ຊຶ່ງພຣະຜູ້ເປັນເຈົ້າ ກໍໄດ້ຢູ່ທີ່ນັ້ນດ້ວຍ (ມທ 9:9–13; ມຣກ 2:14–17; ລກ 5:27–32). ບາງທີມັດທາຍອາດມີຄວາມຮູ້ອັນກວ້າງໄກກ່ຽວກັບຂໍ້ຄວາມໃນພຣະຄຳພີເດີມ ແລະ ສາມາດເຫັນຫລາຍສິ່ງທີ່ເກີດເປັນຈິງຕາມການທຳນາຍໄວ້ກ່ຽວກັບຊີວິດຂອງພຣະຜູ້ເປັນເຈົ້າ. ບໍ່ມີການບອກເລົ່າຫລາຍກ່ຽວກັບຊີວິດໃນບັ້ນທ້າຍຂອງອັກຄະສາວົກ. ຕາມທີ່ບອກເລົ່າກັນມາ ລາວໄດ້ຕາຍຍ້ອນຄວາມເຊື່ອ.

*ພຣະທຳມັດທາຍ:* ໜັງສືເຫລັ້ມທຳອິດໃນພຣະຄຳພີໃໝ່. ບາງທີພຣະທຳມັດທາຍ ໄດ້ຖືກຂຽນຂຶ້ນໃນຕອນຕົ້ນ ເພື່ອໃຫ້ຊາວຢິວໃນຟີລິດສະຕິນ. ມັນໄດ້ໃຊ້ຂໍ້ອ້າງອີງຫລາຍຂໍ້ຈາກພຣະຄຳພີເດີມ. ຈຸດປະສົງຕົ້ນຕໍຂອງມັດທາຍ ແມ່ນເພື່ອສະແດງວ່າ ພຣະເຢຊູຄືພຣະເມຊີອາ ຜູ້ຊຶ່ງສາດສະດາໃນພຣະຄຳພີເດີມໄດ້ກ່າວເຖິງ. ລາວຍັງໄດ້ເນັ້ນອີກວ່າພຣະເຢຊູເປັນ ກະສັດ ແລະ ຜູ້ພິພາກສາຂອງມະນຸດ.

ສຳລັບເຫດການຕ່າງໆໃນຊີວິດຂອງພຣະຜູ້ຊ່ວຍໃຫ້ລອດທີ່ໄດ້ບັນຍາຍໄວ້ໃນພຣະທຳມັດທາຍ, ເບິ່ງ ຄວາມກົມກຽວຂອງພຣະກິດຕິຄຸນ ໃນພາກຫ້ອຍທ້າຍ.

**ມັດເທຍ.** *ເບິ່ງ* ອັກຄະສາວົກ—ການເລືອກອັກຄະສາວົກ *ບຳອີກ*

ຜູ້ທີ່ຖືກເລືອກໃຫ້ມາຮັບຕຳແໜ່ງແທນຢູດາອິສະກາຣິອົດ ໃນຖານະເປັນສະມາຊິກໃນກຸ່ມອັກຄະສາວົກສິບສອງ (ກຈກ 1:15–26). ລາວເປັນສານຸສິດຕະຫລອດໄລຍະທີ່ພຣະເຢຊູໄດ້ປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະອົງ (ກຈກ 1:21–22).

**ມາ.** *ເບິ່ງ* ສານຸສິດ; ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ *ນຳອີກ*

ໃນພຣະຄຳພີ, ສ່ວນຫລາຍແລ້ວໝາຍເຖິງການເຂົ້າໃກ້ບາງຄົນໂດຍການຕິດຕາມ ຫລື ການເຊື່ອຟັງ, ດັ່ງເຊັ່ນໃນສຳນວນທີ່ວ່າ "ຈົ່ງມາຫາພຣະຄຣິດ, ແລະ ຖືກເຮັດໃຫ້ເປັນຄົນດີພ້ອມໃນພຣະອົງ" (ມຣນ 10:32).

ຈົ່ງມາຟັງເຮົາເທີ້ນ, ແລະ ເຊີນມາຫາເຮົາ, **ອຊຢ** 55:3.

ຈົ່ງມາຫາເຮົາ, ທຸກຄົນທີ່ອິດເມື່ອຍຈາກການແບກພາລະໜັກ, **ມທ** 11:28. ຈົ່ງປ່ອຍໃຫ້ເດັກນ້ອຍມາຫາເຮົາ, **ມທ** 19:14. ຖ້າຜູ້ໃດຕ້ອງການຕາມເຮົາມາ ໃຫ້ຕັດສິດຂອງຕົນເອງ, **ລກ** 9:23. ຜູ້ທີ່ມາຫາເຮົາຈະບໍ່ຫິວເຂົ້າຈັກເທື່ອ, **ຢຮ** 6:35.

ພຣະຄຣິດເຊື້ອເຊີນທຸກຄົນໃຫ້ມາຫາພຣະອົງ, **2 ນຟ** 26:33. ຈົ່ງມາຫາເຮົາ ແລະ ເຈົ້າຈະລອດ, **3 ນຟ** 12:20. ຈົ່ງມາຫາພຣະຄຣິດ, **ມຣນ** 10:32.

ເຊື້ອເຊີນທຸກຄົນໃຫ້ມາຫາພຣະຄຣິດ, **ຄພ** 20:59. ມາຫາເຮົາ, ແລະ ຈິດວິນຍານຂອງເຈົ້າຈະມີຊີວິດ, **ຄພ** 45:46.

**ມາໂກກ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ໂກກ *ນຳອີກ*

ໃນພຣະຄຣິສຕະທຳຄຳພີ, ແຜ່ນດິນ ແລະ ຜູ້ຄົນໃກ້ທະເລດຳ. ກະສັດຂອງເຂົາເຈົ້າ, ໂກກ, ຈະນຳພາກອງທັບມາໂກກໄປສູ້ຮົບຄັ້ງສຸດທ້າຍ ກ່ອນການສະເດັດມາຄັ້ງທີສອງຂອງພຣະຄຣິດ (ອຊກ 38:2; 39:6). ພຣະຄຳພີກ່າວເຖິງການສູ້ຮົບອີກຄັ້ງໜຶ່ງທີ່ຍິ່ງໃຫຍ່ຂອງໂກກ ແລະ ມາໂກກ ໃນທ້າຍພັນປີ ລະຫວ່າງກອງທັບຂອງພຣະເຈົ້າ ແລະ ກອງທັບຂອງມານ (ພນມ 20:7–9; ຄພ 88:111–116).

**ມາສ໌, ທອມມັສ ບີ**

ປະທານຄົນທຳອິດຂອງກຸ່ມອັກຄະສາວົກສິບສອງ ຫລັງຈາກສາດສະໜາຈັກໄດ້ຖືກຟື້ນຟູຄືນມາໃໝ່ ໃນປີ 1830. ເພິ່ນດຳລົງຂໍກະແຈຂອງອານາຈັກກ່ຽວກັບອັກຄະສາວົກສິບສອງ (ຄພ 112:16) ແລະ, ໃນປີ 1838, ໄດ້ຖືກບັນຊາໂດຍການເປີດເຜີຍ ເພື່ອໃຫ້ຈັດພິມພຣະຄຳຂອງພຣະຜູ້ເປັນເຈົ້າ (ຄພ 118:2). ພາກ 31 ຂອງຄຳສອນ ແລະ ພັນທະສັນຍາ ແມ່ນເຈາະຈົງໃສ່ເພິ່ນ. ທ່ານມາສ໌ໄດ້ຖືກຕັດອອກຈາກ ສາດສະໜາຈັກ ໃນປີ 1839 ແຕ່ໄດ້ຮັບບັບຕິສະມາຄືນໃໝ່ ໃນເດືອນກໍລະກົດ ປີ 1857.

**ມາທາ.** *ເບິ່ງ* ມາຣີແຫ່ງເບັດທານີ; ລາຊາໂຣ *ນຳອີກ*

ເອື້ອຍຂອງລາຊາໂຣ ແລະ ນາງມາຣີ ໃນພຣະຄຳພີໃໝ່ (ລກ 10:38–42; ຢຮ 11:1–46; 12:2).

**ມານ.** *ເບິ່ງ* ນະລົກ; ບຸດແຫ່ງຄວາມຈິບຫາຍ; ຜູ້ຕໍ່ຕ້ານພຣະຄຣິດ; ຜູ້ທຳລາຍ; ລູຊິເຟີ; ວິນຍານ—ຜີມານຮ້າຍ *ນຳອີກ*

ຊາຕານ. ມານເປັນສັດຕູຂອງຄວາມຊອບທຳ ແລະ ຂອງຄົນທີ່ສະແຫວງຫາທີ່ຈະເຮັດຕາມພຣະປະສົງຂອງພຣະເຈົ້າ. ມັນເປັນບຸດທາງວິນຍານແທ້ໆຂອງພຣະເຈົ້າ ແລະ ຄັ້ງໜຶ່ງເຄີຍເປັນທູດທີ່ມີສິດອຳນາດຢູ່ໃນທີ່ປະທັບຂອງພຣະເຈົ້າ (ອຊຢ 14:12; 2 ນຟ 2:17). ເຖິງຢ່າງໃດກໍຕາມ, ມັນໄດ້ກະບົດໃນຊີວິດກ່ອນມະຕະ ແລະ ໄດ້ຊັກຊວນລູກໆທາງວິນຍານຂອງພຣະບິດາໜຶ່ງສ່ວນສາມ ໃຫ້ກະບົດກັບມັນ (ຄພ 29:36; ມຊ 4:1–4; ອຣຮ 3:27–28). ພວກເຂົາໄດ້ຖືກຂັບໄລ່ອອກຈາກສະຫວັນ, ໄດ້ຖືກປະຕິເສດບໍ່ໃຫ້ມີໂອກາດທີ່ຈະໄດ້ຮັບຮ່າງກາຍມະຕະ ແລະ ປະສົບການຊີວິດມະຕະ, ແລະ ຈະອັບປະໂຫຍດຊົ່ວນິລັນດອນ. ນັບແຕ່ເວລາມານໄດ້ຖືກຂັບໄລ່ອອກຈາກສະຫວັນ, ມັນໄດ້ຫລອກລວງມະນຸດທັງໝົດຢູ່ບໍ່ຂາດ ແລະ ນຳພາເຂົາໄປຈາກວຽກງານຂອງພຣະເຈົ້າ ເພື່ອວ່າຈະໄດ້ເຮັດໃຫ້ມະນຸດຊາດເສົ້າສະຫລົດໃຈຄືກັນກັບມັນ (ພນມ 12:9; 2 ນຟ 2:27; 9:8–9).

ພຣະເຢຊູໄດ້ສັ່ງຜີມານຮ້າຍໃຫ້ອອກໄປ, **ມທ** 17:18. ບຶງໄຟທີ່ໄໝ້ຢູ່ຕະຫລອດໄປເປັນນິດໄດ້ຖືກຈັດຕຽມໄວ້ສຳລັບມານ ແລະ ບໍລິ

ວານ ຂອງ ມັນ, **ມທ** 25:41. ຈົ່ງ ຕໍ່ ສູ້ ກັບ ມານ ແລະ ມັນຈະໜີຈາກພວກເຈົ້າໄປ, **ຢກບ** 4:7.

ຄົນຊົ່ວຈະຖືກນຳລົງໄປສູ່ການເປັນຂະເລີຍຂອງມານ, **1 ນຟ** 14:7. ມານ ເປັນບິດາຂອງຄວາມຂີ້ຕົວະທັງປວງ, **2 ນຟ** 2:18 (ມຊ 4:4). ມານສະແຫວງຫາເພື່ອມະນຸດທັງປວງຈະໄດ້ເສົ້າສະຫລົດໃຈຄືກັນກັບມັນ, **2 ນຟ** 2:27. ຖ້າຫາກເນື້ອໜັງຈະບໍ່ລຸກຂຶ້ນອີກຕໍ່ໄປ, ວິນຍານຂອງພວກເຮົາຍ່ອມຕ້ອງມາຂຶ້ນຢູ່ກັບມານ, **2 ນຟ** 9:8–9. ມານຈະເຮັດໃຫ້ຄົນໂຫດຮ້າຍ, ສະຫງົບ, ແລະ ຍົກຍໍ, **2 ນຟ** 28:20–23. ສິ່ງທີ່ບໍ່ດີມາຈາກມານ, **ອມນ** 1:25 (ແອວ 5:40; ມຣນ 7:12, 17). ຈົ່ງລະວັງຢ້ານວ່າຈະມີການຂັດແຍ້ງກັນເກີດຂຶ້ນໃນບັນດາພວກທ່ານ, ແລະ ພວກທ່ານຈະເຊື່ອຟັງວິນຍານຊົ່ວ, **ມຊຢ** 2:32. ຖ້າຫາກພວກທ່ານບໍ່ແມ່ນແກະຂອງຜູ້ລ້ຽງແກະທີ່ດີ, ພວກທ່ານເປັນແກະຂອງມານ, **ແອວ** 5:38–39. ມານຈະບໍ່ຄ້ຳຊູລູກຫລານຂອງມັນ, **ແອວ** 30:60. ຈົ່ງອະທິຖານຢູ່ສະເໝີເພື່ອພວກທ່ານຈະບໍ່ຖືກຊັກນຳໄປໂດຍການລໍ້ລວງຂອງມານ, **ແອວ** 34:39 (3 ນຟ 18:15, 18). ຈົ່ງສ້າງຮາກຖານຂອງລູກເທິງດານຫີນຂອງພຣະຜູ້ໄຖ່ ເພື່ອວ່າເມື່ອມານສົ່ງລົມພະຍຸຂອງມັນມາ ມັນຈະບໍ່ມີອຳນາດອັນໃດເໜືອທ່ານ ຫລື ເໜືອລູກ, **ຮລມ** 5:12. ມານເປັນຜູ້ສ້າງບາບທັງປວງ, **ຮລມ** 6:26–31.

ມານໄດ້ສະແຫວງຫາທີ່ຈະວາງແຜນອັນມີເລ່ຫລ່ຽມ, **ຄພ** 10:12. ມັນຈຳເປັນວ່າມານຈະຕ້ອງລໍ້ລວງລູກຫລານມະນຸດ, ຖ້າບໍ່ດັ່ງນັ້ນພວກເຂົາຈະບໍ່ສາມາດເປັນຕົວແທນ, **ຄພ** 29:39. ອາດາມໄດ້ຂຶ້ນຢູ່ກັບຄວາມປະສົງຂອງມານ ເພາະລາວຜ່າຍແພ້ຕໍ່ການລໍ້ລວງ, **ຄພ** 29:40. ບຸດແຫ່ງຄວາມຈິບຫາຍຈະປົກຄອງນຳມານ ແລະ ບໍລິວານຂອງມັນໃນຊົ່ວນິລັນດອນ, **ຄພ** 76:32–33, 44. ມານຈະຖືກມັດໄວ້ເປັນເວລາໜຶ່ງພັນປີ, **ຄພ** 88:110 (ພນມ 20:2). ຄົນຊົ່ວຄົນນັ້ນໄດ້ເອົາຄວາມສະຫວ່າງ ແລະ ຄວາມຈິງໄປ, **ຄພ** 93:39.

ຊາຕານໄດ້ຮັກສາສະພາວະທຳອິດຂອງມັນ, **ອຣຮ** 3:28.

*ສາດສະໜາຈັກຂອງມານ:* ທຸກການຈັດຕັ້ງທີ່ຊົ່ວ ແລະ ເປັນຂອງໂລກຢູ່ເທິງແຜ່ນດິນໂລກນີ້ ທີ່ບິດເບືອນຈາກພຣະກິດຕິຄຸນທີ່ບໍລິສຸດ ແລະ ດີພ້ອມທຸກຢ່າງ ແລະ ຕໍ່ສູ້ກັບພຣະເມສານ້ອຍຂອງພຣະເຈົ້າ.

ມານໄດ້ຈັດຕັ້ງສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງຂຶ້ນ, **1 ນຟ** 13:6 (1 ນຟ 14:9). ມີພຽງສາດສະໜາຈັກສອງແຫ່ງ, ແຫ່ງໜຶ່ງເປັນຂອງພຣະເມສານ້ອຍ ແລະ ອີກແຫ່ງໜຶ່ງເປັນຂອງມານ, **1 ນຟ** 14:10 (ແອວ 5:39).

ຢ່າຂັດແຍ້ງກັບສາດສະໜາຈັກໃດເລີຍ, ນອກຈາກສາດສະໜາຈັກຂອງມານເທົ່ານັ້ນ, **ຄພ** 18:20. ສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງຈະຖືກໂຄ່ນລົ້ມລົງ, **ຄພ** 29:21.

### ມ່ານ

ຄຳໜຶ່ງທີ່ຖືກໃຊ້ໃນພຣະຄຳພີ ເພື່ອໝາຍເຖິງ (1) ສິ່ງຂັ້ນສະຖານທີ່ນະມັດສະການ ຫລື ພຣະວິຫານ, (2) ເປັນສັນຍາລັກສຳລັບການແຍກລະຫວ່າງ ພຣະເຈົ້າ ແລະ ມະນຸດ, (3) ຜ້າບາງໆທີ່ຜູ້ຄົນໃຊ້ຄຸມໜ້າ ແລະ ຫົວ, ຫລື (4) ຄວາມຊົງຈຳທີ່ພຣະເຈົ້າໄດ້ລຶບອອກ ເພື່ອບໍ່ໃຫ້ຜູ້ຄົນຈື່ຈຳຊີວິດກ່ອນມະຕະ.

ຜ້າກັ້ງຈະແຍກບ່ອນສັກສິດຈາກບ່ອນສັກສິດທີ່ສຸດ, **ອພຍ** 26:33.

ຜ້າກັ້ງໃນພຣະວິຫານ ກໍໄດ້ຈີກອອກເປັນສອງຕ່ອນແຕ່ເທິງຮອດລຸ່ມ ຕອນຄຶງພຣະຄຣິດ, **ມທ** 27:51 (ມຣກ 15:38; ລກ 23:45). ດຽວນີ້ເຮົາທັງຫລາຍເຫັນພໍມົວໆເໝືອນເບິ່ງໃນແວ່ນ; ແຕ່ເວລານັ້ນຈະໄດ້ເຫັນພຣະພັກຢ່າງຄັກ, **1 ກຣທ** 13:12.

ມ່ານອັນມືດມົວແຫ່ງຄວາມບໍ່ເຊື່ອຖືຖືກໂຍນຖິ້ມໄປຈາກຈິດໃຈຂອງເພິ່ນແລ້ວ, **ແອວ** 19:6. ນ້ອງຊາຍຂອງຢາເຣັດບໍ່ສາມາດຖືກກີດກັນຈາກການເຫັນສິ່ງທີ່ປິດບັງຢູ່ພາຍໃນບໍ່ໄດ້, **ອທ** 3:19 (ອທ 12:19).

ມ່ານຈະຖືກສີກອອກ ແລະ ພວກເຈົ້າຈະເຫັນເຮົາ, **ຄພ** 67:10 (ຄພ 38:8). ມ່ານທີ່ເປັນເຄື່ອງຄຸມຂອງພຣະວິຫານຂອງເຮົາຈະຖືກເອົາອອກໄປ, **ຄພ** 101:23. ມ່ານໄດ້ຖືກ

ເອົາອອກໄປຈາກຈິດໃຈຂອງພວກເຮົາ, **ຄພ** 110:1.

ຄວາມ ມືດ ຈະ ປົກ ຄຸມ ແຜ່ນ ດິນ ໂລກ, **ມຊ** 7:61.

**ມານາ.** *ເບິ່ງ* ອາຫານທິບແຫ່ງຊີວິດ; ອົບພະຍົບ *ນຳອີກ*

ວັດຖຸກົມໆກ້ອນນ້ອຍໆ ມີລົດຊາດຄືກັນກັບນ້ຳເຜິ້ງ (ອພຍ 16:14–31) ຫລື ຄືກັນກັບນ້ຳມັນສົດ (ຈບຊ 11:7–8). ພຣະຜູ້ເປັນເຈົ້າໄດ້ຈັດຫາໃຫ້ ເພື່ອລ້ຽງດູລູກຫລານຂອງອິດສະຣາເອນ ລະຫວ່າງສີ່ສິບປີ ໃນຖິ່ນແຫ້ງແລ້ງກັນດານ (ອພຍ 16:4–5, 14–30, 35; ຢຊ 5:12; 1 ນຟ 17:28).

ລູກຫລານຂອງອິດສະຣາເອນເອີ້ນມັນວ່າ ມານາ (ຫລື *ມາຮູ* ໃນພາສາເຮັບເຣີ)—ຊຶ່ງໝາຍຄວາມວ່າ "ແມ່ນຫຍັງ?"— ເພາະວ່າພວກເຂົາບໍ່ຮູ້ວ່າ ມັນແມ່ນຫຍັງ (ອພຍ 16:15). ມັນ ຍັງ ຖືກ ເອີ້ນວ່າ "ອາຫານເທບ" ແລະ "ອາຫານທິບຈາກສະຫວັນ" (ພສສ 78:24–25; ຢຮ 6:31). ມັນເປັນເຄື່ອງໝາຍເຖິງ ພຣະຄຣິດ, ຜູ້ຊຶ່ງຈະເປັນອາຫານທິບ ແຫ່ງຊີວິດ (ຢຮ 6:31–35).

**ມານາເຊ.** *ເບິ່ງ* ໂຢເຊັບ, ລູກຊາຍຂອງຢາໂຄບ; ອິດສະຣາເອນ; ເອຟະຣາອິມ *ນຳອີກ*

ໃນພຣະຄຳພີເດີມ, ເປັນລູກຊາຍກົກຂອງນາງ ອາເຊນັດ ກັບ ໂຢເຊັບ ຜູ້ຖືກຂາຍໄປປະເທດເອຢິບ (ປຖກ 41:50–51). ລາວກັບເອຟະຣາອິມ ນ້ອງຊາຍຂອງລາວ ເປັນຫລານຊາຍຂອງຢາໂຄບ (ອິດສະຣາເອນ) ແຕ່ໄດ້ຖືກຮັບເປັນລູກບຸນທຳ ແລະ ໄດ້ຮັບພອນຈາກເພິ່ນ ຄືກັບວ່າເຂົາເຈົ້າໄດ້ເປັນລູກຊາຍຂອງເພິ່ນແທ້ໆ (ປຖກ 48:1–20).

*ເຜົ່າຂອງມານາເຊ:* ລູກຫລານຂອງມານາເຊໄດ້ຖືກນັບເຂົ້າໃນບັນດາເຜົ່າຕ່າງໆຂອງອິດສະຣາເອນ (ຈບຊ 1:34–35; ຢຊ 13:29–31). ພອນຂອງໂມເຊທີ່ມອບໃຫ້ແກ່ເຜົ່າຂອງໂຢເຊັບ, ຊຶ່ງໄດ້ມອບໃຫ້ເອຟະຣາອິມ ແລະ ມານາເຊນຳອີກ, ມີບັນທຶກໄວ້ຢູ່ໃນ ພຣະບັນຍັດສອງ 33:13–17. ສ່ວນໜຶ່ງຂອງແຜ່ນດິນທີ່ມອບໝາຍໃຫ້ ແມ່ນຢູ່ທາງພາກຕາເວັນຕົກຂອງຈໍແດນ ແລະ ຕໍ່ກັບແຜ່ນດິນເອຟະຣາອິມ. ເຂົາເຈົ້າກໍມີຫົວເມືອງຢູ່ທາງພາກຕາເວັນອອກຂອງຈໍແດນນຳອີກ ໃນທົ່ງທີ່ອຸດົມສົມບູນຂອງບາຊານ ແລະ ກີເລອາດ. ໃນຍຸກສຸດທ້າຍ, ເຜົ່າຂອງມານາເຊຈະຊ່ວຍເຫລືອເຜົ່າຂອງເອຟະຣາອິມ ໃນການເຕົ້າໂຮມອິດສະຣາເອນທີ່ກະຈັດກະຈາຍໄປ (ພບຍ 33:13–17). ສາດສະດາລີໄຮ ໃນພຣະຄຳພີມໍມອນ ເປັນເຊື້ອສາຍຂອງມານາເຊ (ແອວ 10:3).

**ມານຍາ.** *ເບິ່ງ* ຫລອກລວງ, ການຫລອກລວງ, ຄວາມຫລອກລວງ *ນຳອີກ*

ໃນພຣະຄຳພີ, ມານຍາແມ່ນການຕົວະແບບມີເລ່ຫລ່ຽມ

ຄວາມ ສຸກ ເປັນຂອງຜູ້ຫວິດການຫລອກລວງທັງສິ້ນ, **ພສສ** 32:2 (ພສສ 34:13; 1 ປຕ 2:1).

ນະທານາເອັນເປັນຄົນອິດສະຣາເອນແທ້ໃນຕົວລາວບໍ່ມີອຸບາຍເລີຍ, **ຢຮ** 1:47 (ຄພ 41:9–11).

ຄວາມຮູ້ອັນບໍລິສຸດຂະຫຍາຍຈິດວິນຍານປາດສະຈາກອຸບາຍ, **ຄພ** 121:42.

**ມານດາ, ແມ່.** *ເບິ່ງ* ຄອບຄົວ; ພໍ່ແມ່, ບິດາມານດາ; ເອວາ *ນຳອີກ*

ຕຳແໜ່ງທີ່ສັກສິດຂອງຜູ້ຍິງ ຜູ້ໃຫ້ກຳເນີດ ຫລື ເອົາເດັກນ້ອຍມາລ້ຽງເປັນລູກບຸນທຳ. ມານດາຊ່ວຍເຫລືອໃນແຜນຂອງພຣະເຈົ້າ ໂດຍການຈັດຫາຮ່າງກາຍທີ່ເປັນມະຕະໃຫ້ແກ່ລູກໆທາງວິນຍານຂອງພຣະເຈົ້າ.

ອາດາມໃສ່ຊື່ໃຫ້ເມຍຂອງຕົນວ່າເອວາ ເພາະນາງເປັນແມ່ຂອງມະນຸດທັງປວງ, **ປຖກ** 3:20 (ມຊ 4:26). ຈົ່ງນັບຖືພໍ່ແມ່ຂອງເຈົ້າ, **ອພຍ** 20:12 (ອຟຊ 6:1–3; ມຊຢ 13:20). ຈົ່ງເອົາໃຈໃສ່ຕໍ່ສິ່ງທີ່ແມ່ບອກສອນ, **ສພສ** 1:8. ລູກທີ່ໂງ່ຈ້າເບົາປັນຍາເຮັດໃຫ້ແມ່ຖືກໝິ່ນປະໝາດ, **ສພສ** 15:20 (ສພສ 10:1). ເມື່ອແມ່ຂອງເຈົ້າເຖົ້າແກ່ ຈົ່ງຮູ້ຈັກບຸນຄຸນຂອງເພິ່ນ,

**ສພສ** 23:22. ພວກລູກໆຕ່າງກໍພໍໃຈໃນຕົວນາງ ແລະ ຜູ້ເປັນຜົວກໍຍ້ອງ ຍໍຊົມເຊີຍນາງດ້ວຍ, **ສພສ** 31:28.

ມານດາຂອງພຣະເຢຊູໄດ້ຢືນຢູ່ໃກ້ໄມ້ກາງແຂນ, **ຢຮ** 19:25–27.

ນັກຮົບຊາວເລມັນສອງພັນຄົນໄດ້ຮັບການສິດສອນຈາກແມ່ຂອງພວກເຂົາ, **ແອວ** 56:47 (ແອວ 57:21).

ແມ່ເອວາຜູ້ປະເສີດຂອງພວກເຂົາ ເປັນຜູ້ໜຶ່ງໃນບັນດາຜູ້ສຳຄັນທີ່ພຣະຜູ້ເປັນເຈົ້າໄດ້ໃຫ້ຄຳແນະນຳຢູ່ໃນໂລກວິນຍານ, **ຄພ** 138:38–39.

**ມາລາກີ**

ສາດສະດາໃນພຣະຄຳພີເດີມ ຜູ້ໄດ້ຂຽນ ແລະ ທຳນາຍ ປະມານ 430 ປີ ກ່ອນ ຄ.ສ.

*ພຣະທຳມາລາກີ:* ໜັງສື ຫລື ການທຳນາຍຂອງມາລາກີ ເປັນໜັງສືເຫລັ້ມສຸດທ້າຍຢູ່ໃນພຣະຄຳພີເດີມ. ເບິ່ງຄືວ່າ ມີເນື້ອໃຫຍ່ໃຈຄວາມຢູ່ສີ່ຢ່າງຄື: (1) ບາບຂອງຊາວອິດສະຣາເອນ—ມາລາກີ 1:6–2:17; 3:8–9; (2) ການພິພາກສາທີ່ຈະມາສູ່ຊາວອິດສະຣາເອນເພາະການບໍ່ເຊື່ອຟັງຂອງພວກເຂົາ—ມາລາກີ 1:14; 2:2–3, 12; 3:5; (3) ຄຳສັນຍາສຳລັບການເຊື່ອຟັງ—ມາລາກີ 3:10–12, 16–18; 4:2–3; ແລະ (4) ການທຳນາຍທີ່ກ່ຽວກັບຊາວອິດສະຣາເອນ—ມາລາກີ 3:1–5; 4:1, 5–6 (ຄພ 2; 128:17; ຈສ—ປ 1:37–39).

ໃນການທຳນາຍຂອງເພິ່ນ, ມາລາກີໄດ້ຂຽນເຖິງໂຢຮັນບັບຕິສະໂຕ (ມລກ 3:1; ມທ 11:10), ກົດສ່ວນສິບ (ມລກ 3:7–12), ການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ (ມລກ 4:5), ແລະ ການກັບມາຂອງເອລີຢາ (ມລກ 4:5–6; ຄພ 2; 128:17; ຈສ—ປ 1:37–39). ພຣະຜູ້ຊ່ວຍໃຫ້ລອດໄດ້ອ້າງເຖິງ ມາລາກີ ບົດທີ 3 ແລະ 4 ທັງໝົດແກ່ຊາວນີໄຟ (3 ນຟ 24–25).

**ມາຣະໂກ.** *ເບິ່ງ* ພຣະທຳ *ນຳອີກ*

ໃນພຣະຄຳພີໃໝ່, ໂຢຮັນ ມາຣະໂກ ເປັນລູກຊາຍຂອງນາງມາຣີ, ຜູ້ອາໄສຢູ່ເມືອງເຢຣູຊາເລັມ (ກຈກ 12:12); ລາວອາດເປັນລູກພີ່ນ້ອງ (ຫລື ຫລານຊາຍ) ຂອງບາຣະນາບາ (ກລຊ 4:10). ລາວໄດ້ໄປກັບໂປໂລ ແລະ ບາຣະນາບາຈາກເຢຣູຊາເລັມ ໃນການເດີນທາງໄປສອນສາດສະໜາເທື່ອທຳອິດ ຂອງເຂົາເຈົ້າ, ແລະ ໄດ້ປະເຂົາເຈົ້າໄວ້ຢູ່ເມືອງເປກາ (ກຈກ 12:25; 13:5, 13). ຕໍ່ມາລາວໄດ້ໄປຫາເກາະໄຊປຣັດກັບບາຣະນາບາ (ກຈກ 15:37–39). ລາວໄດ້ຢູ່ໃນກຸງໂຣມນຳໂປໂລ (ກລຊ 4:10; ຟລມ 1:24); ແລະ ລາວໄດ້ຢູ່ເມືອງບາບີໂລນນຳເປໂຕ (ບາງທີຢູ່ກຸງໂຣມ) (1 ປຕ 5:13). ສຸດທ້າຍ, ລາວໄດ້ຢູ່ເມືອງເອເຟໄຊກັບຕີໂມທຽວ (2 ຕມທ 4:11).

*ພຣະທຳມາຣະໂກ:* ໜັງສືເຫລັ້ມທີສອງໃນພຣະຄຳພີໃໝ່. ພຣະທຳມາຣະໂກອາດຖືກຂຽນພາຍໃຕ້ການຊີ້ນຳຂອງເປໂຕ. ຈຸດປະສົງຂອງເພິ່ນແມ່ນທີ່ຈະບັນຍາຍເຖິງພຣະຜູ້ເປັນເຈົ້າວ່າເປັນພຣະບຸດຂອງພຣະເຈົ້າ ທີ່ດຳລົງຊີວິດ ແລະ ປະຕິບັດຢູ່ໃນບັນດາຜູ້ຄົນ. ມາຣະໂກບັນຍາຍດ້ວຍພະລັງ ແລະ ຄວາມຖ່ອມຕົວເຖິງຄວາມຮູ້ສຶກປະທັບໃຈ ທີ່ພຣະເຢຊູໄດ້ປະຕິບັດກັບຜູ້ຄົນທົ່ວໄປ. ຕາມທີ່ບອກເລົ່າກັນມາຫລັງຈາກການຕາຍຂອງເປໂຕ, ມາຣະໂກໄດ້ໄປຢ້ຽມຢາມປະເທດເອຢິບ, ໄດ້ຈັດຕັ້ງສາດສະໜາຈັກຂຶ້ນໃນເມືອງອາເລັກຊັນເດຍ, ແລະ ໄດ້ຕາຍຍ້ອນຄວາມເຊື່ອ.

ສຳລັບເຫດການຕ່າງໆໃນຊີວິດຂອງພຣະຜູ້ຊ່ວຍໃຫ້ລອດທີ່ໄດ້ບັນຍາຍໄວ້ໃນພຣະທຳມາຣະໂກ, ເບິ່ງ ຄວາມກົມກຽວຂອງພຣະກິດຕິຄຸນ ໃນພາກຫ້ອຍທ້າຍ.

**ມາຣີ, ມານດາຂອງພຣະເຢຊູ.** *ເບິ່ງ* ພຣະເຢຊູຄຣິດ; ໂຢເຊັບ, ສາມີຂອງນາງມາຣີ *ນຳອີກ*

ໃນພຣະຄຳພີໃໝ່, ຍິງບໍລິສຸດທີ່ພຣະເຈົ້າອົງເປັນພຣະບິດາ ໄດ້ເລືອກໃຫ້ເປັນມານດາຂອງພຣະບຸດຂອງພຣະອົງໃນເນື້ອໜັງ. ຫລັງຈາກໄດ້ໃຫ້ກຳເນີດແກ່ພຣະເຢຊູແລ້ວ, ມາຣີໄດ້ມີລູກຄົນອື່ນໆນຳອີກ (ມຣກ 6:3).

ນາງໄດ້ເປັນຄູ່ໝັ້ນຂອງໂຢເຊັບ, **ມທ** 1:18 (ລກ 1:27). ໂຢເຊັບໄດ້ຖືກບອກວ່າບໍ່ໃຫ້ປະ

ຮ້າງ ນາງ ມາຣີ ຫລື ຖອນ ໝັ້ນ ກັບ ນາງ, **ມທ** 1:18–25. ພວກໂຫ ລາຈານໄດ້ມາຢ້ຽມຢາມ ນາງມາຣີ, **ມທ** 2:11. ນາງມາຣີ ແລະ ໂຢເຊັບ ໄດ້ໜີໄປປະເທດເອຢິບກັບກຸມມານນ້ອຍເຢຊູ, **ມທ** 2 :13–14. ຫລັງ ຈາກ ເຮໂຣດ ໄດ້ ຕາຍ ໄປ, ຄອບຄົວໄດ້ກັບຄືນສູ່ເມືອງນາຊາເຣັດ, **ມທ** 2:19–23. ທູດຄັບຣີເອນໄດ້ມາຢ້ຽມຢາມ ນາງ, **ລກ** 1:26–38. ນາງໄດ້ໄປຢ້ຽມຢາມເອລີ ຊາເບັດ, ພີ່ນ້ອງຂອງນາງ, **ລກ** 1:36, 40–45. ນາງມາຣີໄດ້ຮ້ອງເພງສັນລະເສີນພຣະຜູ້ເປັນ ເຈົ້າ, **ລກ** 1:46–55. ນາງມາຣີໄດ້ໄປເມືອງເບັດ ເລເຮັມກັບໂຢເຊັບ, **ລກ** 2:4–5. ນາງມາຣີໄດ້ ໃຫ້ກຳເນີດແກ່ພຣະເຢຊູ ແລະ ໄດ້ວາງພຣະ ອົງໄວ້ໃນຮາງຫຍ້າ, **ລກ** 2:7. ພວກລ້ຽງແກະ ໄດ້ໄປຫາເມືອງເບັດເລເຮັມເພື່ອຢ້ຽມຢາມ ກຸມມານນ້ອຍເຢຊູ, **ລກ** 2:16–20. ນາງມາຣີ ແລະ ໂຢເຊັບ ໄດ້ພາພຣະເຢຊູໄປຫາພຣະ ວິຫານໃນເມືອງເຢຣູຊາເລັມ, **ລກ** 2:21–38. ນາງມາຣີ ແລະ ໂຢເຊັບ ໄດ້ພາພຣະເຢຊູໄປ ງານປັດສະຄາ, **ລກ** 2:41–52. ນາງມາຣີໄດ້ໄປ ງານແຕ່ງງານທີ່ບ້ານການາ, **ຢຮ** 2:2–5. ພຣະ ຜູ້ຊ່ວຍໃຫ້ລອດ, ໃນຂະນະທີ່ຢູ່ເທິງໄມ້ກາງ ແຂນ, ໄດ້ຂໍໃຫ້ໂຢຮັນດູແລມານດາຂອງພຣະ ອົງ, **ຢຮ** 19:25–27. ນາງມາຣີໄດ້ຢູ່ກັບພວກ ອັກຄະສາວົກຫລັງຈາກພຣະຄຣິດໄດ້ຖືກພາ ຂຶ້ນໄປສູ່ສະຫວັນ, **ກຈກ** 1:14.

ນາງມາຣີເປັນຜູ້ຍິງບໍລິສຸດຄົນໜຶ່ງທີ່ຈົບງາມ ທີ່ສຸດເກີນກວ່າຜູ້ຍິງບໍລິສຸດຄົນອື່ນໆ, **1 ນຟ** 11:13–20. ມານດາຂອງພຣະຄຣິດຈະມີຊື່ວ່າ ມາຣີ, **ມຊຢ** 3:8. ນາງມາຣີຈະເປັນຍິງບໍລິສຸດ, ເປັນພາຊະນະທີ່ປະເສີດ ແລະ ຖືກເລືອກໄວ້ ແລ້ວ, **ແອວ** 7:10.

**ມາຣີ, ມານດາຂອງມາຣະໂກ.** *ເບິ່ງ* ມາຣະ ໂກ *ບຳອີກ*

ໃນພຣະຄຳພີໃໝ່, ມານດາຂອງໂຢຮັນ ມາ ຣະໂກ, ຜູ້ໄດ້ຂຽນພຣະທຳມາຣະໂກ (ກຈກ 12:12).

**ມາຣີ ມັກດາລີນ**

ຍິງຄົນໜຶ່ງໃນພຣະຄຳພີໃໝ່ ຜູ້ໄດ້ກາຍເປັນ ສານຸສິດທີ່ອຸທິດຕົນຂອງພຣະເຢຊູຄຣິດ. ມັກ ດາລີນ ຍັງຖືກເອີ້ນອີກວ່າ ມັກດາລາ, ຕາມຊື່ ສະຖານທີ່ບ່ອນທີ່ນາງອາໄສຢູ່. ມັນຕັ້ງຢູ່ແຄມ ທະເລທາງເບື້ອງຕາເວັນຕົກຂອງທະເລຄາລີ ເລ.

ນາງ ໄດ້ ຢູ່ ໃກ້ ໄມ້ ກາງ ແຂນ, **ມທ** 27:56 (ມຣກ 15:40; ຢຮ 19:25). ນາງໄດ້ຢູ່ໃນພິທີ ຝັງພຣະສົບຂອງພຣະຄຣິດ, **ມທ** 27:61 (ມຣກ 15:47). ນາງໄດ້ຢູ່ທີ່ອຸບມຸງໃນມື້ເຊົ້າຂອງການ ຟື້ນຄືນພຣະຊົນ, **ມທ** 28:1 (ມຣກ 16:1; ລກ 24:10; ຢຮ 20:1, 11). ພຣະເຢຊູໄດ້ມາປະກົດ ຕໍ່ນາງເປັນຜູ້ທຳອິດ ຫລັງຈາກພຣະອົງໄດ້ຟື້ນ ຄືນພຣະຊົນ, **ມຣກ** 16:9 (ຢຮ 20:14–18). ຜີ ມານຮ້າຍເຈັດໂຕໄດ້ອອກໄປຈາກນາງ, **ລກ** 8:2.

**ມາຣີແຫ່ງເບັດທານີ.** *ເບິ່ງ* ມາທາ; ລາຊາໂຣ *ບຳອີກ*

ໃນ ພຣະຄຳພີໃໝ່, ເອື້ອຍຂອງລາຊາໂຣ ແລະ ນ້ອງສາວຂອງນາງມາທາ.

ນາງມາຣີໄດ້ນັ່ງຟັງຢູ່ທີ່ພຣະບາດຂອງພຣະ ເຢຊູ, **ລກ** 10:39, 42. ນາງມາຣີ ແລະ ນາງ ມາທາ ເອື້ອຍຂອງນາງໄດ້ສົ່ງຄົນໄປຫາພຣະ ເຢຊູ, **ຢຮ** 11:1–45. ນາງໄດ້ເອົານ້ຳມັນຫອມ ລ້າງພຣະບາດໃຫ້ແກ່ພຣະເຢຊູ, **ຢຮ** 12:3–8.

**ມິວເລັກ.** *ເບິ່ງ* ເຊເດກີຢາ *ບຳອີກ*

ລູກຊາຍຂອງກະສັດເຊເດກີຢາໃນພຣະຄຳ ພີເດີມ (ປະມານ 589 ປີ ກ່ອນ ຄ.ສ.). ພຣະ ຄຣິສຕະທຳຄຳພີ ບັນທຶກວ່າ ລູກຊາຍທຸກຄົນ ຂອງເຊເດກີຢາໄດ້ຖືກຂ້າ (2 ກສ 25:7), ແຕ່ ພຣະຄຳພີມໍມອນໄດ້ແຈ້ງວ່າ ມິວເລັກໄດ້ລອດ ຊີວິດ (ຮລມ 8:21).

ເຊຣາເຮັມລາເປັນຜູ້ສືບຕະກຸນຂອງມິວ ເລັກ, **ມຊຢ** 25:2. ຜູ້ຄົນຂອງມິວເລັກໄດ້ເຂົ້າ ຮ່ວມຊາວນີໄຟ, **ມຊຢ** 25:13. ພຣະຜູ້ເປັນເຈົ້າ ໄດ້ນຳມິວເລັກເຂົ້າໄປຫາແຜ່ນດິນທາງພາກ ເໜືອ, **ຮລມ** 6:10. ລູກຊາຍທຸກຄົນຂອງເຊເດ ກີຢາໄດ້ຖືກຂ້າຕາຍນອກຈາກມິວເລັກ, **ຮລມ** 8:21.

**ມີກາ**

ສາດສະດາໃນພຣະຄຳພີເດີມ. ເພິ່ນເປັນຄົນຂອງເມືອງໂມເລເຊັດກາດສາ, ໃນທົ່ງພຽງຂອງຢູດາ, ແລະ ໄດ້ທຳນາຍ ໃນຂະນະທີ່ເຮເຊກີຢາເປັນກະສັດແຫ່ງຢູດາ (ມກ 1:1–2).

*ພຣະທຳມີກາ:* ມີກາເປັນໜັງສືເຫລັ້ມດຽວເທົ່ານັ້ນໃນພຣະຄຳພີເດີມ ທີ່ບອກວ່າ ເມືອງເບັດເລເຮັມ ເປັນສະຖານທີ່ ທີ່ພຣະເມຊີອາຈະກຳເນີດ (ມກ 5:2). ໃນໜັງສືເຫລັ້ມນີ້ ພຣະຜູ້ເປັນເຈົ້າໄດ້ແນະນຳຜູ້ຄົນຂອງພຣະອົງ ແລະ ໄດ້ເລົ່າພຣະກະລຸນາທິຄຸນທີ່ຜ່ານມາຂອງພຣະອົງໃຫ້ພວກເຂົາຟັງ; ພຣະອົງໄດ້ຮຽກຮ້ອງຄວາມຍຸດຕິທຳ, ຄວາມເມດຕາ, ແລະ ຄວາມອ່ອນນ້ອມ ຈາກພວກເຂົາ (ມກ 6:8).

**ມີຄາເອນ.** *ເບິ່ງ* ອັກຄະທູດ; ອາດາມ *ນຳອີກ*

ຊື່ຂອງອາດາມ ທີ່ຮູ້ຈັກກັນຕອນມີຊີວິດກ່ອນມະຕະ. ເພິ່ນຖືກເອີ້ນວ່າ ອັກຄະທູດ. ໃນພາສາເຮັບເຣີ ຊື່ນີ້ໝາຍເຖິງ "ຜູ້ທີ່ເປັນເໝືອນພຣະເຈົ້າ."

ມີຄາເອນ, ເຈົ້າຊາຍອົງໃຫຍ່, ໄດ້ມາຊ່ວຍດານີເອນ, **ດນອ** 10:13, 21 (ຄພ 78:16). ມີຄາເອນ ເຈົ້າຊາຍອົງໃຫຍ່ ຈະມາປະກົດໃນຍຸກສຸດທ້າຍ, **ດນອ** 12:1.

ມີຄາເອນອັກຄະທູດໄດ້ຜິດຖຽງກັບມານ, **ຢດ** 1:9. ມີຄາເອນ ແລະ ເຫລົ່າທູດຂອງເພິ່ນໄດ້ຕໍ່ສູ້ກັບພະຍານາກ, **ພນມ** 12:7 (ດນອ 7).

ມີຄາເອນແມ່ນອາດາມ, **ຄພ** 27:11 (ຄພ 107:53–57; 128:21). ມີຄາເອນ, ອັກຄະທູດຂອງພຣະຜູ້ເປັນເຈົ້າ, ຈະເປົ່າແກຂອງລາວ, **ຄພ** 29:26. ມີຄາເອນຈະເຕົ້າໂຮມກອງທັບຂອງເພິ່ນ ແລະ ຕໍ່ສູ້ກັບຊາຕານ, **ຄພ** 88:112–115. ໄດ້ຍິນສຽງຂອງມີຄາເອນ ສັງເກດເຫັນມານ, **ຄພ** 128:20.

**ມີຊີວິດຊີວາ.** *ເບິ່ງ* ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ *ນຳອີກ*

ທີ່ຈະເຮັດໃຫ້ມີຊີວິດ, ທີ່ຈະຟື້ນຄືນຊີວິດ, ຫລື ທີ່ຈະປ່ຽນບຸກຄົນ ເພື່ອວ່າເຂົາຈະສາມາດຢູ່ໃນທີ່ປະທັບຂອງພຣະເຈົ້າ.

ພຣະເຈົ້າໄດ້ບັນດານໃຫ້ພວກເຮົາເປັນຄືນມາສູ່ຊີວິດກັບພຣະຄຣິດ, **ອຟຊ** 2:4–5 (ກລຊ 2:6, 12–13). ຝ່າຍກາຍພຣະອົງຖືກປະຫານໃນເນື້ອໜັງ, ແຕ່ຝ່າຍວິນຍານພຣະອົງຖືກບັນດານໃຫ້ຄືນພຣະຊົນ, **1 ປຕ** 3:18 (ຄພ 138:7).

ບໍ່ເຄີຍມີມະນຸດຄົນໃດເຄີຍເຫັນພຣະເຈົ້າ, ຍົກເວັ້ນແຕ່ໄດ້ຖືກເຮັດໃຫ້ມີຊີວິດຊີວາໂດຍພຣະວິນຍານ, **ຄພ** 67:11. ການໄຖ່ແມ່ນຜ່ານພຣະອົງທີ່ເຮັດໃຫ້ທຸກສິ່ງທັງປວງມີຊີວິດຊີວາ, **ຄພ** 88:16–17. ໄພ່ພົນຂອງພຣະເຈົ້າ ຈະຖືກເຮັດໃຫ້ມີຊີວິດຊີວາຄືນອີກ ແລະ ຖືກພາຂຶ້ນໄປເຝົ້າພຣະຄຣິດ, **ຄພ** 88:96.

ອາດາມໄດ້ຖືກເຮັດໃຫ້ມີຊີວິດຊີວາຂຶ້ນໃນຈິດໃຈ, **ມຊ** 6:65.

**ມີຣິອາມ.** *ເບິ່ງ* ໂມເຊ *ນຳອີກ*

ໃນພຣະຄຳພີເດີມ, ເອື້ອຍຂອງໂມເຊ (ຈບຊ 26:59).

ໄດ້ຊອມເບິ່ງອູ່ທີ່ເຮັດດ້ວຍໄມ້ອໍ້, **ອພຍ** 2:1–8. ໄດ້ຕີກອງນຳພາກຸ່ມຜູ້ຍິງອອກໜ້າ, **ອພຍ** 15:20–21. ໄດ້ເວົ້າຕໍ່ສູ້ໂມເຊ ແລະ ໄດ້ຖືກທຳໂທດດ້ວຍໂຣກຜິວໜັງ, ແລ້ວໄດ້ຫາຍດີ, **ຈບຊ** 12:1–15 (ພບຍ 24:9).

**ມື, ການວາງ.** *ເບິ່ງ* ການປະຕິບັດຕໍ່ຄົນເຈັບປ່ວຍ; ຂອງປະທານແຫ່ງພຣະວິນຍານບໍລິສຸດ; ແຕ່ງຕັ້ງ, ການແຕ່ງຕັ້ງ; ແຕ່ງຕັ້ງເປັນທາງການ, ການແຕ່ງຕັ້ງເປັນທາງການ *ນຳອີກ*

ເປັນການວາງມືໃສ່ເທິງຫົວຂອງຄົນໃດຄົນໜຶ່ງ ຊຶ່ງເປັນພາກສ່ວນໜຶ່ງຂອງພິທີການຂອງຖານະປະໂລຫິດ. ພິທີການຫລາຍຢ່າງຂອງຖານະປະໂລຫິດໄດ້ຖືກປະຕິບັດໂດຍການວາງມື, ດັ່ງເຊັ່ນພິທີການແຕ່ງຕັ້ງ, ການໃຫ້ພອນ, ການປະຕິບັດຕໍ່ຄົນເຈັບປ່ວຍ, ການຢືນຢັນການເປັນສະມາຊິກໃນສາດສະໜາຈັກ, ແລະ ການມອບພຣະວິນຍານບໍລິສຸດ.

ໂມເຊໄດ້ວາງມືໃສ່ເທິງຫົວຂອງໂຢຊວຍ, ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ບັນຊາ, **ຈບຊ** 27:18, 22–23 (ພບຍ 34:9).

ພຣະເຢຊູໄດ້ວາງມືໃສ່ຄົນເຈັບໄຂ້ໄດ້ປ່ວຍບາງຄົນ, ແລະ ໂຜດຮັກສາພວກເຂົາໃຫ້ຫາຍດີ, **ມຣກ** 6:5 (ມມ 9:24). ອັກຄະສາວົກໄດ້ວາງມືໃສ່ເຈັດຄົນທີ່ຈະຊ່ວຍເຫລືອພວກເພິ່ນ, **ກຈກ** 6:5–6. ພຣະວິນຍານບໍລິສຸດໄດ້ຖືກມອບໃຫ້ໂດຍການວາງມື, **ກຈກ** 8:14–17. ອານາເນຍໄດ້ວາງມືໃສ່ໂຊໂລ ແລະ ໂຜດໃຫ້ລາວເຫັນຮຸ່ງອີກ, **ກຈກ** 9:12, 17–18. ໂປໂລໄດ້ວາງມືໃສ່ເທິງຫົວຂອງເພິ່ນ ແລະ ໄດ້ປິ່ນປົວເພິ່ນ, **ກຈກ** 28:8. ໂປໂລໄດ້ສິດສອນເຖິງເລື່ອງບັບຕິສະມາ ແລະ ພິທີວາງມື, **ຮຮ** 6:2.

ແອວມາໄດ້ແຕ່ງຕັ້ງປະໂລຫິດ ແລະ ແອວເດີໂດຍການວາງມື, **ແອວ** 6:1. ພຣະເຢຊູໄດ້ປະທານອຳນາດໃຫ້ສານຸສິດຂອງພຣະອົງເພື່ອຈະໄດ້ມອບພຣະວິນຍານບໍລິສຸດໂດຍການວາງມື, **3 ນຟ** 18:36–37. ເຈົ້າຈະປົກມືໃສ່ເພື່ອມອບພຣະວິນຍານບໍລິສຸດໃຫ້, **ມຣນ** 2:2.

ພວກແອວເດີຕ້ອງວາງມືຂອງພວກເຂົາໃສ່ເທິງຫົວຂອງເດັກນ້ອຍເພື່ອມອບພອນໃຫ້, **ຄພ** 20:70. ພວກເຂົາຈະໄດ້ຮັບພຣະວິນຍານບໍລິສຸດໂດຍການວາງມື, **ຄພ** 35:6 (ຫຼຊ 1:4). ພວກແອວເດີຈະວາງມືໃສ່ເທິງຫົວຂອງຄົນທີ່ເຈັບປ່ວຍ, **ຄພ** 42:44 (ຄພ 66:9). ເດັກນ້ອຍຕ້ອງໄດ້ຮັບການວາງມືຫລັງຈາກບັບຕິສະມາ, **ຄພ** 68:27. ໄດ້ຮັບຖານະປະໂລຫິດໂດຍການວາງມື, **ຄພ** 84:6–16.

**ເມັດຜັກກາດ**

ເມັດຂອງຕົ້ນຜັກກາດ. ເຖິງແມ່ນວ່າມັນເປັນເມັດນ້ອຍໆ, ແຕ່ຕົ້ນຂອງມັນສູງໃຫຍ່. ພຣະເຢຊູໄດ້ປຽບທຽບອານາຈັກສະຫວັນໃສ່ກັບເມັດຜັກກາດ (ມທ 13:31).

ຖ້າຫາກພວກເຈົ້າມີຄວາມເຊື່ອທໍ່ເມັດຜັກກາດ, ພວກເຈົ້າກໍຈະສາມາດເຄື່ອນຍ້າຍພູໄດ້, **ມທ** 17:20.

**ເມຊາກ.** *ເບິ່ງ* ດານີເອນ *ບຳອິກ*

ໃນພຣະຄຳພີເດີມ, ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ເປັນຊາຍໜຸ່ມຊາວອິດສະຣາເອນສາມຄົນ, ຜູ້ຊຶ່ງພ້ອມດ້ວຍ ດານີເອນ, ໄດ້ຖືກພາໄປຫາວັງຂອງເນບູກາດເນັດສາ, ກະສັດແຫ່ງບາບີໂລນ. ຊື່ເຮັບເຣີຂອງເມຊາກ ແມ່ນ ມີຊາເອນ. ຊາຍໜຸ່ມສີ່ຄົນໄດ້ປະຕິເສດບໍ່ຍອມເຮັດໃຫ້ຕົນເອງເສື່ອມເສຍໂດຍການກິນຊີ້ນ ແລະ ດື່ມເຫລົ້າອະງຸ່ນຂອງກະສັດ (ດນອ 1). ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ຖືກກະສັດສັ່ງໃຫ້ໂຍນເຂົ້າເຕົາໄຟຮ້ອນ ແຕ່ພວກເຂົາໄດ້ຖືກຮັກສາໄວ້ (ດນອ 3).

**ເມດຕາ, ມີເມດຕາ, ຄວາມເມດຕາ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ຍຸດຕິທຳ, ຄວາມຍຸດຕິທຳ; ພຣະຄຸນ; ພຣະເຢຊູຄຣິດ; ອະໄພ, ໃຫ້ອະໄພ *ບຳອິກ*

ວິນຍານແຫ່ງຄວາມເມດຕາສົງສານ, ຄວາມອ່ອນໂຍນ, ແລະ ການໃຫ້ອະໄພ. ຄວາມເມດຕາເປັນຄຸນສົມບັດຢ່າງໜຶ່ງຂອງພຣະເຈົ້າ. ພຣະເຢຊູຄຣິດໄດ້ສະເໜີມອບຄວາມເມດຕາແກ່ເຮົາ ຜ່ານການເສຍສະລະຊົດໃຊ້ຂອງພຣະອົງ.

ພຣະຜູ້ເປັນເຈົ້າເຕັມໄປດ້ວຍຄວາມເມດຕາ ແລະ ປານີ, **ອພຍ** 34:6 (ພບຍ 4:31). ຄວາມຮັກຂອງພຣະອົງກໍດຳລົງຢູ່ຕະຫລອດໄປເປັນນິດ, **1 ຂຄ** 16:34. ພຣະຄຸນຄວາມດີກັບຄວາມຮັກອັນຍິ່ງໃຫຍ່ ຈະປະດັບຂ້າພຣະອົງໄວ້ສືບໄປ, **ພສສ** 23:6. ຄວາມສຸກເປັນຂອງຜູ້ທີ່ເຮັດດີກັບຄົນຍາກຈົນ, **ສພສ** 14:21. ເຮົາປາດຖະໜາຄວາມເມດຕາ ບໍ່ແມ່ນການເຜົາຖວາຍແກ່ເຮົາ, **ຮສອ** 6:6.

ຜູ້ໃດມີໃຈກະລຸນາກໍເປັນສຸກ: ເພາະວ່າຜູ້ນັ້ນຈະໄດ້ຮັບຄວາມເມດຕາ, **ມທ** 5:7 (3 ນຟ 12:7). ວິບັດແກ່ຄົນໜ້າຊື່ໃຈຄົດ ຜູ້ໄດ້ຈ່າຍເງິນສ່ວນສິບ ແຕ່ໄດ້ປະຂໍ້ສຳຄັນຂອງກົດບັນຍັດຄື ຄວາມຍຸດຕິທຳ, ຄວາມເມດຕາ, ແລະ ສັດທາ, **ມທ** 23:23. ຈົ່ງເມດຕາປານີເໝືອນຢ່າງພຣະບິດາຂອງພວກເຈົ້າມີຄວາມເມດຕາປານີ, **ລກ** 6:36. ບໍ່ແມ່ນຍ້ອນກິດຈະການອັນຊອບທຳທີ່ເຮົາເອງໄດ້ເຮັດ, ແຕ່ພຣະອົງໄດ້ຊ່ວຍເຮົາໃຫ້ລອດດ້ວຍພຣະເມດຕາຂອງພຣະອົງ, **ຕຕ** 3:5.

ພຣະຜູ້ເປັນເຈົ້າມີຄວາມເມດຕາອັນລະອຽດອ່ອນຕໍ່ທຸກຄົນ, **1 ນຟ** 1:20. ຄົນທີ່ບໍ່ກັບໃຈ

ຈະບໍ່ໄດ້ຮັບຄວາມເມດຕາເລີຍ, **ມຊຢ** 2:38–39. ພຣະເຈົ້າມີຄວາມເມດຕາຕໍ່ຄົນທັງປວງທີ່ເຊື່ອໃນພຣະນາມຂອງພຣະອົງ, **ແອວ** 32:22. ຄວາມເມດຕາສາມາດສະໜອງຂໍ້ຮຽກຮ້ອງແຫ່ງຄວາມຍຸດຕິທຳໄດ້, **ແອວ** 34:16. ລູກຄິດວ່າຄວາມເມດຕາຂະໂມຍຄວາມຍຸດຕິທຳໄດ້ບໍ, **ແອວ** 42:25 (ແອວ 42:13–25). ເດັກນ້ອຍໆມີຊີວິດຢູ່ໃນພຣະຄຣິດ ເພາະພຣະເມດຕາຂອງພຣະອົງ, **ມຣນ** 8:19–20 (ຄພ 29:46).

ພຣະພາຫາ ແຫ່ງຄວາມເມດຕາຂອງພຣະເຢຊູຄຣິດ ໄດ້ຊິດໃຊ້ເພື່ອບາບຂອງພວກເຈົ້າ, **ຄພ** 29:1. ໂດຍຄຸນນະທຳຂອງໂລຫິດທີ່ເຮົາໄດ້ຫລັ່ງ, ເຮົາໄດ້ອ້ອນວອນຕໍ່ພຣະບິດາແທນເຂົາທີ່ເຊື່ອໃນນາມຂອງເຮົາ, **ຄພ** 38:4. ຄົນທີ່ໄດ້ຮັກສາພັນທະສັນຍາ ຈະໄດ້ຮັບຄວາມເມດຕາ, **ຄພ** 54:6. ເຮົາ, ພຣະຜູ້ເປັນເຈົ້າ, ໃຫ້ອະໄພບາບ, ແລະ ມີເມດຕາແກ່ຜູ້ສາລະພາບບາບຂອງຕົນດ້ວຍຫົວໃຈທີ່ຖ່ອມ, **ຄພ** 61:2. ເຮົາ, ພຣະຜູ້ເປັນເຈົ້າ, ສະແດງຄວາມເມດຕາຕໍ່ຄົນທີ່ອ່ອນໂຍນ, **ຄພ** 97:2. ແລະ ຄົນໃດທີ່ຮັບເອົາເຈົ້າດັ່ງເດັກນ້ອຍໆ, ກໍໄດ້ຮັບເອົາອານາຈັກຂອງເຮົາ; ເພາະພວກເຂົາຈະໄດ້ຮັບຄວາມເມດຕາ, **ຄພ** 99:3.

ຄວາມເມດຕາຈະອອກໄປຕໍ່ພຣະພັກຂອງພຣະອົງ, **ມຊ** 7:31.

**ເມດຕາສົງສານ, ຄວາມເມດຕາສົງສານ.** *ເບິ່ງ* ໃຈບຸນ, ຄວາມໃຈບຸນ; ເມດຕາ, ມີເມດຕາ, ຄວາມເມດຕາ; ຮັກ, ຄວາມຮັກ *ບຳອີກ*

ໃນພຣະຄຳພີ, ຄວາມເມດຕາສົງສານມີຄວາມໝາຍແທ້ໆວ່າ “ທີ່ຈະເປັນທຸກນຳ.” ມັນກໍຍັງໝາຍເຖິງການທີ່ຈະສະແດງຄວາມເສຍໃຈນຳ, ຄວາມອີດູຕົນ, ແລະ ຄວາມເມດຕາຕໍ່ຄົນອື່ນ.

ພຣະຜູ້ເປັນເຈົ້າໄດ້ເອີ້ນຜູ້ຄົນຂອງພຣະອົງໃຫ້ສະແດງຄວາມເມດຕາສົງສານ, **ຊກຢ** 7:8–10.

ພຣະເຢຊູມີໃຈເມດຕາສົງສານ, **ມທ** 9:36 (ມທ 20:34; ມຣກ 1:41; ລກ 7:13). ໄທຊາມາເຣຍຄົນໜຶ່ງມີໃຈເມດຕາສົງສານລາວ, **ລກ** 10:33. ຈົ່ງມີຄວາມເມດຕາສົງສານກັນ, **1 ປຕ** 3:8.

ພຣະຄຣິດເຕັມໄປດ້ວຍຄວາມເມດຕາສົງສານຕໍ່ລູກຫລານມະນຸດ, **ມຊຢ** 15:9. ອຸທອນຂອງເຮົາເຕັມໄປດ້ວຍຄວາມເມດຕາສົງສານເຈົ້າ, **3 ນຟ** 17:6.

ໂຈເຊັບ ສະມິດ ໄດ້ອະທິຖານຂໍຄວາມເມດຕາສົງສານຈາກພຣະຜູ້ເປັນເຈົ້າ, **ຄພ** 121:3–5.

**ເມຍ, ພັນລະຍາ.** *ເບິ່ງ* ຄອບຄົວ; ແຕ່ງງານ, ການແຕ່ງງານ

**ເມທູເຊລາ.** *ເບິ່ງ* ເອນົກ *ບຳອີກ*

ລູກຊາຍຂອງເອນົກໃນພຣະຄຳພີເດີມ. ເມທູເຊລາໄດ້ມີຊີວິດຢູ່ 969 ປີ (ປຖກ 5:21–27; ລກ 3:37; ມຊ 8:7). ເພິ່ນເປັນສາດສະດາທີ່ຊອບທຳ ຜູ້ໄດ້ຖືກປະໄວ້ເທິງແຜ່ນດິນໂລກ ຕອນເມືອງຂອງເອນົກ ຖືກຍົກຂຶ້ນໄປສະຫວັນ. ເພິ່ນໄດ້ຢູ່ເທິງແຜ່ນດິນໂລກ ເພື່ອໃຫ້ມີລູກຫລານສືບຕໍ່ໄປ ຊຶ່ງຈາກຕະກຸນນີ້ທີ່ໂນອາໄດ້ເກີດມາ (ມຊ 8:3–4).

**ເມນຄີເສເດັກ.** *ເບິ່ງ* ຊາເລັມ; ຖານະປະໂລຫິດແຫ່ງເມນຄີເສເດັກ *ບຳອີກ*

ມະຫາປະໂລຫິດ, ສາດສະດາ, ແລະ ຜູ້ນຳທີ່ຍິ່ງໃຫຍ່ໃນພຣະຄຳພີເດີມ, ຜູ້ໄດ້ມີຊີວິດຢູ່ຫລັງຈາກນ້ຳຖ້ວມ ແລະ ລະຫວ່າງວັນເວລາຂອງອັບຣາຮາມ. ເພິ່ນຖືກເອີ້ນວ່າ ກະສັດຂອງຊາເລັມ (ເຢຣູຊາເລັມ), ກະສັດແຫ່ງສັນຕິສຸກ, ກະສັດແຫ່ງຄວາມຊອບທຳ (ໃນພາສາເຮັບເຣີໝາຍຄວາມວ່າ ເມນຄີເສເດັກ), ແລະ ເປັນປະໂລຫິດຂອງພຣະເຈົ້າສູງສຸດ.

ອັບຣາຮາມໄດ້ຈ່າຍເງິນສ່ວນສິບໃຫ້ແກ່ເມນຄີເສເດັກ, **ປຖກ** 14:18–20. ຜູ້ຄົນຂອງເມນຄີເສເດັກມີຄວາມຊອບທຳ, ແລະ ໄດ້ຂຶ້ນສະຫວັນ, **ປຈສ, ປຖກ** 14:25–40.

ພຣະຄຣິດເປັນມະຫາປະໂລຫິດຕາມລະບຽບຂອງເມນຄີເສເດັກ, **ຮຣ** 5:6. ເມນຄີເສເດັກເປັນກະສັດຂອງເມືອງຊາເລັມ, ເປັນປະໂລຫິດຂອງພຣະເຈົ້າຜູ້ສູງສຸດ, **ຮຣ** 7:1–3.

ບໍ່ມີຜູ້ໃດຍິ່ງໃຫຍ່ກວ່າເມນຄີເສເດັກ, **ແອວ** 13:14–19.

ອັບ ຣາ ຮາມ ໄດ້ຮັບ ຖານະປະ ໂລ ຫິດ ຈາກ ເມນຄີເສເດັກ, **ຄພ** 84:14. ດ້ວຍຄວາມນັບຖື ຕໍ່ພຣະນາມຂອງພຣະຜູ້ເປັນເຈົ້າ, ສາດສະໜາ ຈັກໃນສະໄໝບູຮານ ໄດ້ເອີ້ນຖານະປະໂລຫິດ ທີ່ສູງກວ່ານັ້ນວ່າ ຖານະປະໂລຫິດແຫ່ງເມນຄີ ເສເດັກ, **ຄພ** 107:1–4.

**ແມ່ນ້ຳຈໍແດນ**

ແມ່ນ້ຳຈໍແດນເລີ່ມຕົ້ນຈາກທະເລຄາລີເລລົງ ໄປຫາທະເລຕາຍ. ແມ່ນ້ຳສາຍນີ້ຍາວ 100 ໄມ (160 ກິໂລແມັດ) ແລະ ປະກອບດ້ວຍແມ່ນ້ຳ ນ້ອຍຫລາຍສາຍຈາກພູເຮີໂມນ. ມັນເປັນແມ່ ນ້ຳທີ່ສຳຄັນທີ່ສຸດໃນອິດສະຣາເອນ.

ເຫດການສອງຢ່າງທີ່ສຳຄັນທີ່ກ່ຽວພັນກັບ ແມ່ນ້ຳສາຍນີ້ ແມ່ນພຣະຜູ້ເປັນເຈົ້າໄດ້ແຍກ ນ້ຳໃຫ້ຊາວອິດສະຣາເອນຂ້າມໄປ (ຢຊ 3:14–17), ແລະ ການບັບຕິສະມາຂອງພຣະເຢຊູ ຄຣິດ (ມທ 3:13–17; 1 ນຟ 10:9).

**ແມ່ໝ້າຍ.** *ເບິ່ງ* ຄວາມຜາສຸກ *ບຳອີກ*

ຜູ້ຍິງທີ່ສາມີໄດ້ຕາຍປະ ແລະ ບໍ່ໄດ້ແຕ່ງງານ ໃໝ່.

ລູກກຳພ້າ ແລະ ແມ່ໝ້າຍຈະມາ ແລະ ກິນ, **ພບຍ** 14:29.

ແມ່ ໝ້າຍທີ່ຍາກຈົນໄດ້ຖວາຍເງິນທັງໝົດ ທີ່ນາງມີ, **ມຣກ** 12:41–44. ຢ້ຽມຢາມລູກກຳ ພ້າ ແລະ ຍິງໝ້າຍ ທີ່ມີຄວາມທຸກຮ້ອນ, **ຢກບ** 1:27.

ພຣະຜູ້ເປັນເຈົ້າຈະເປັນພະຍານຕໍ່ສູ້ພວກທີ່ ເອົາປຽບແມ່ໝ້າຍ, **3 ນຟ** 24:5 (ຊກຢ 7:10).

ແມ່ໝ້າຍ ແລະ ເດັກກຳພ້າ ຈະຕ້ອງໄດ້ຮັບ ການຈັດຫາໃຫ້, **ຄພ** 83:6 (ຄພ 136:8).

**ມົງກຸດ, ສວມມົງກຸດ.** *ເບິ່ງ* ຊີວິດນິລັນດອນ *ບຳອີກ*

ເຄື່ອງປະດັບທີ່ເປັນວົງມົນ ຊຶ່ງຜູ້ປົກຄອງ ສວມໄວ້ເທິງຫົວ. ມັນສາມາດເປັນເຄື່ອງໝາຍ ແຫ່ງອຳນາດຊັ້ນສູງ, ເຂດຄອບຄອງ, ການ ເປັນພຣະເຈົ້າ. ຜູ້ທີ່ອົດທົນຈົນເຖິງທີ່ສຸດໂດຍ ການຮັກສາພຣະບັນຍັດທັງໝົດຂອງພຣະເຈົ້າ ຈະໄດ້ຮັບມົງກຸດແຫ່ງຊີວິດນິລັນດອນ. (ເບິ່ງ ຄພ 20:14; ມຊ 7:56; ຈສ—ມ 1:1.)

ມົງກຸດແຫ່ງຄວາມຊອບທຳຖືກຈັດໄວ້ຖ້າ ເຮົາແລ້ວ, **2 ຕມທ** 4:8. ພວກເຈົ້າຈະໄດ້ຮັບມົງ ກຸດອັນສະຫງ່າລາສີທີ່ບໍ່ມີວັນເສົ້າໝອງ, **1 ປຕ** 5:4.

ຄົນຕາຍ ຊຶ່ງຕາຍໃນພຣະຜູ້ເປັນເຈົ້າ ຈະໄດ້ ຮັບ ມົງກຸດແຫ່ງຄວາມຊອບທຳ, **ຄພ** 29:13. ພວກເຂົາຈະໄດ້ຮັບ ມົງກຸດ ໃນຜາສາດຂອງ ພຣະບິດາຂອງເຮົາ, **ຄພ** 59:2. ພຣະຜູ້ເປັນ ເຈົ້າຕຽມໄພ່ພົນຂອງພຣະເຈົ້າໃຫ້ຂຶ້ນມາຮັບ ເອົາມົງກຸດທີ່ໄດ້ຕຽມໄວ້ໃຫ້ພວກເຂົາ, **ຄພ** 78:15. ພຣະຜູ້ເປັນເຈົ້າໄດ້ສັນຍາວ່າຈະມອບ ມົງກຸດແຫ່ງລັດສະໝີພາບໃຫ້ແກ່ໄພ່ພົນຂອງ ພຣະເຈົ້າທາງມືຂວາຂອງພຣະອົງ, **ຄພ** 104:7.

**ໂມເຊ.** *ເບິ່ງ* ການປ່ຽນສະພາບ—ການປ່ຽນ ສະພາບຂອງພຣະຄຣິດ; ກົດຂອງໂມເຊ; ພຣະບັນຍັດ, ສິບປະການ; ເພັນຕາຕຸກ; ອາໂຣນ, ອ້າຍຂອງໂມເຊ *ບຳອີກ*

ສາດສະດາໃນພຣະຄຳພີເດີມ ຜູ້ໄດ້ນຳພາ ຊາວອິດສະຣາເອນອອກຈາກຄວາມເປັນທາດ ຢູ່ປະເທດເອຢິບ ແລະ ໄດ້ມອບກົດເລື່ອງສາດ ສະໜາ, ສັງຄົມ, ແລະ ການບໍລິໂພກໃຫ້ເຂົາ ເຈົ້າ ດັ່ງທີ່ພຣະເຈົ້າໄດ້ເປີດເຜີຍ.

ການປະຕິບັດສາດສະໜາກິດຂອງໂມເຊ ແມ່ນເກີນກວ່າຂອບເຂດຂອງຊີວິດໃນໂລກ ມະຕະຂອງເພິ່ນ. ໂຈເຊັບ ສະມິດ ໄດ້ສອນວ່າ ເພິ່ນໄດ້ມາກັບເອລີຢາ, ມາທີ່ພູແຫ່ງການປ່ຽນ ສະພາບ ແລະ ໄດ້ມອບຂໍກະແຈຂອງຖານະ ປະໂລຫິດ ໃຫ້ແກ່ເປໂຕ, ຢາໂກໂບ, ແລະ ໂຢຮັນ (ມທ 17:3–4; ມຣກ 9:4–9; ລກ 9:30; ຄພ 63:21).

ໂມເຊໄດ້ປະກົດຕໍ່ໂຈເຊັບ ສະມິດ ແລະ ອໍລິ ເວີ ຄາວເດີຣີ ໃນວັນທີ 3 ເດືອນເມສາ 1836, ໃນພຣະວິຫານເຄີດແລນ, ລັດໂອໄຮໂອ, ແລະ ໄດ້ມອບຂໍກະແຈແຫ່ງການເຕົ້າໂຮມຂອງຊາວ ອິດສະຣາເອນໃຫ້ແກ່ພວກເພິ່ນ (ຄພ 110:11).

ການເປີດເຜີຍຍຸກສຸດທ້າຍກ່າວຫລາຍເທື່ອ

ກ່ຽວກັບ ໂມເຊ. ເພິ່ນ ໄດ້ຖືກກ່າວເຖິງເລື້ອຍໆ ຢູ່ໃນພຣະຄຳພີມໍມອນ, ແລະ ຈາກພຣະຄຳພີ ຄຳສອນ ແລະ ພັນທະສັນຍາ ເຮົາຮຽນຮູ້ກ່ຽວ ກັບການປະຕິບັດສາດສະໜາກິດຂອງເພິ່ນ (ຄພ 84:20–26) ແລະ ວ່າເພິ່ນໄດ້ຮັບຖານະ ປະໂລຫິດຈາກເຢທະໂຣ ພໍ່ເຖົ້າຂອງເພິ່ນ (ຄພ 84:6).

ການເປີດເຜີຍຍຸກສຸດທ້າຍຍັງໄດ້ຢືນຢັນ ເລື່ອງລາວໃນພຣະຄຣິສຕະທຳຄຳພີອີກ ກ່ຽວ ກັບການປະຕິບັດສາດສະໜາກິດຂອງເພິ່ນ ໃນບັນດາລູກຫລານຂອງອິດສະຣາເອນ ແລະ ຢືນຢັນຕື່ມອີກວ່າ ເພິ່ນເປັນຜູ້ຂຽນປຶ້ມ ຫ້າເຫລັ້ມທຳອິດຂອງພຣະຄຳພີເດີມ (1 ນຟ 5:11; ມຊ 1:40–41).

ໄດ້ຖືກຊ່ວຍຊີວິດໄວ້ໂດຍທິດາຂອງຟາ ຣາໂອ, **ອພຍ** 2:1–10. ໄດ້ໜີໄປຫາມີດີອານ, **ອພຍ** 2:11–22. ທູດຂອງພຣະຜູ້ເປັນເຈົ້າໄດ້ ປະກົດຕົວໃຫ້ເພິ່ນເຫັນຢູ່ໃນພຸ່ມໄມ້ທີ່ລຸກເປັນ ໄຟ, **ອພຍ** 3:1–15. ໄດ້ປະກາດວ່າ ໂຣກລະ ບາດຈະເກີດກັບຊາວເອຢິບ, **ອພຍ** 7–11. ພຣະຜູ້ເປັນເຈົ້າໄດ້ແຕ່ງຕັ້ງງານປັດສະຄາ, **ອພຍ** 12:1–30. ໄດ້ນຳພາລູກຫລານຂອງ ອິດສະຣາເອນຂ້າມນ້ຳທະເລແດງ, **ອພຍ** 14:5–31. ພຣະຜູ້ເປັນເຈົ້າໄດ້ສົ່ງມານາລົງມາ ໃນຖິ່ນແຫ້ງແລ້ງກັນດານ, **ອພຍ** 16. ຕີໂງ່ນຫີນ ຢູ່ທີ່ພູໂຮເຣັບ ແລະ ນ້ຳໄດ້ໄຫລອອກມາ, **ອພຍ** 17:1–7. ອາໂຣນ ແລະ ຮູເຣ ໄດ້ຍົກແຂນຂອງ ເພິ່ນຂຶ້ນ ເພື່ອວ່າໂຢຊວຍຈະເອົາຊະນະອາມາ ເຫລັກ, **ອພຍ** 17:8–16. ເຢທະໂຣໄດ້ໃຫ້ຄຳ ແນະນຳແກ່ເພິ່ນ, **ອພຍ** 18:13–26. ໄດ້ຕຽມ ຜູ້ຄົນສຳລັບການມາປະກົດຂອງພຣະຜູ້ເປັນ ເຈົ້າຢູ່ເທິງພູຊີນາຍ, **ອພຍ** 19. ພຣະຜູ້ເປັນເຈົ້າ ໄດ້ເປີດເຜີຍພຣະບັນຍັດສິບປະການຕໍ່ເພິ່ນ, **ອພຍ** 20:1–17. ເພິ່ນກັບບັນດາຫົວໜ້າເຈັດ ສິບຄົນໄດ້ເຫັນພຣະເຈົ້າ, **ອພຍ** 24:9–11. ໄດ້ ເຮັດແຜ່ນຫີນແຕກ ແລະ ໄດ້ທຳລາຍງົວຄຳ, **ອພຍ** 32:19–20. ໄດ້ກ່າວກັບພຣະເຈົ້າໜ້າຕໍ່ ໜ້າ, **ອພຍ** 33:9–11.

ໄດ້ປະກົດຕອນພຣະເຢຊູປ່ຽນພຣະກາຍ, **ມທ** 17:1–13 (ມຣກ 9:2–13; ລກ 9:28–36).

ຂໍໃຫ້ພວກເຮົາຈົ່ງເຂັ້ມແຂງເໝືອນດັ່ງ ໂມເຊ, **1 ນຟ** 4:2. ພຣະຄຣິດເປັນສາດສະດາ ຄືກັນກັບໂມເຊ ທີ່ພຣະຜູ້ເປັນເຈົ້າຈະຍົກຂຶ້ນ, **1 ນຟ** 22:20–21 (ພບຍ 18:15; 3 ນຟ 20:23).

ໄດ້ນຳພາອິດສະຣາເອນໂດຍການເປີດ ເຜີຍ, **ຄພ** 8:3. ໄດ້ເຫັນຢູ່ໃນບັນດາວິນຍານທີ່ ສູງສັກ, **ຄພ** 138:41.

ໄດ້ເຫັນພຣະເຈົ້າໜ້າຕໍ່ໜ້າ, **ມຊ** 1:2, 31. ເປັນເໝືອນພຣະອົງດຽວທີ່ຖືກຳເນີດ, **ມຊ** 1:6, 13. ໄດ້ຂຽນສິ່ງທີ່ໄດ້ເປີດເຜີຍແກ່ເພິ່ນກ່ຽວກັບ ການສ້າງ, **ມຊ** 2:1.

*ໜັງສືໂມເຊ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີ ໄຂ່ມຸກອັນລ້ຳຄ່າ ທີ່ບັນຈຸການແປເຈັດບົດທຳ ອິດໃນປະຖົມມະການທີ່ດົນໃຈຂອງໂຈເຊັບ ສະມິດ.

ບົດທີ 1 ບັນທຶກພາບນິມິດ ຊຶ່ງໃນນັ້ນໂມເຊ ໄດ້ເຫັນພຣະເຈົ້າ, ຜູ້ໄດ້ເປີດເຜີຍຕໍ່ເພິ່ນກ່ຽວ ກັບແຜນແຫ່ງຄວາມລອດ. ບົດທີ 2–5 ເລື່ອງ ລາວກ່ຽວກັບການສ້າງ ແລະ ການຕົກຂອງ ມະນຸດ. ບົດທີ 6–7 ບັນຈຸ ພາບນິມິດກ່ຽວກັບ ເອນົກ ແລະ ການປະຕິບັດສາດສະໜາກິດ ຂອງເພິ່ນຢູ່ເທິງແຜ່ນດິນໂລກ. ບົດທີ 8 ບັນຈຸ ພາບນິມິດກ່ຽວກັບໂນອາ ແລະ ນ້ຳຖ້ວມທີ່ຍິ່ງ ໃຫຍ່.

*ໜັງສືຫ້າເຫລັ້ມຂອງໂມເຊ: ເບິ່ງ*

ຈົດເຊັນບັນຊີ; ປະຖົມມະການ; ພຣະບັນ ຍັດສອງ; ລະບຽບພວກເລວີ; ອົບພະຍົບໜັງສື ຫ້າເຫລັ້ມທຳອິດຂອງພຣະຄຳພີເດີມ ເປັນທີ່ຮູ້ ຈັກກັນວ່າໜັງສືຂອງໂມເຊ. ແຜ່ນຈາລຶກທອງ ເຫລືອງທີ່ນີໄຟເອົາຈາກລາບານ ບັນຈຸໜັງສື ຂອງໂມເຊ (1 ນຟ 5:11).

ນີໄຟໄດ້ອ່ານຫລາຍເລື່ອງ ຊຶ່ງມີຂຽນຢູ່ໃນ ໜັງສືຂອງໂມເຊ, **1 ນຟ** 19:23.

**ໂມໄຊຢາ, ບິດາຂອງເບັນຢາມິນ.** *ເບິ່ງ* ເຊຣາ ເຮັມລາ; ເບັນຢາມິນ, ບິດາຂອງໂມໄຊຢາ *ນຳອີກ*

ໃນພຣະຄຳພີມໍມອນ, ສາດສະດາຊາວນີໄຟ ຜູ້ໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດປົກຄອງຜູ້ຄົນ ຢູ່ໃນເຊຣາເຮັມລາ.

ໂມໄຊຢາໄດ້ຖືກເຕືອນໃຫ້ໜີໄປຈາກແຜ່ນດິນນີໄຟ, **ອມນ** 1:12. ເພິ່ນໄດ້ພົບເຫັນຜູ້ຄົນຂອງເຊຣາເຮັມລາ, **ອມນ** 1:14–15. ເພິ່ນໃຫ້ຜູ້ຄົນຂອງເຊຣາເຮັມລາໄດ້ຮັບການສອນໃນພາສາຂອງເພິ່ນ, **ອມນ** 1:18. ເພິ່ນໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດຂອງປະຊາຄົມ, **ອມນ** 1:19. ເບັນຢາມິນ ລູກຊາຍຂອງເພິ່ນ ໄດ້ຂຶ້ນປົກຄອງຫລັງຈາກເພິ່ນເສຍຊີວິດໄປ, **ອມນ** 1:23.

**ໂມໄຊຢາ, ພວກລູກຊາຍຂອງ.** *ເບິ່ງ* ໂມໄຊຢາ, ລູກຊາຍຂອງເບັນຢາມິນ; ອາໂຣນ, ລູກຊາຍຂອງໂມໄຊຢາ; ອອມເນີ; ອຳໂມນ, ລູກຊາຍຂອງໂມໄຊຢາ; ຮິມໄນ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍສີ່ຄົນຂອງກະສັດ ໂມໄຊຢາ ຜູ້ໄດ້ປ່ຽນໃຈເຫລື້ອມໃສຫລັງຈາກທູດໄດ້ມາປະກົດຕໍ່ເຂົາເຈົ້າ ແລະ ສັ່ງເຂົາເຈົ້າໃຫ້ກັບໃຈ. ເຂົາເຈົ້າຊື່ວ່າ ອຳໂມນ, ອາໂຣນ, ອອມເນີ, ແລະ ຮິມໄນ (ມຊຍ 27:34). ເຂົາເຈົ້າໄດ້ໃຊ້ເວລາສິບສີ່ປີ ໃນການສັ່ງສອນພຣະກິດຕິຄຸນຢ່າງມີປະສິດທິພາບໃຫ້ແກ່ຊາວເລມັນ. ບັນທຶກຂອງການປະຕິບັດສາດສະໜາກິດຂອງເຂົາເຈົ້າໃນບັນດາຊາວເລມັນ ມີຢູ່ໃນໜັງສືແອວມາ, ບົດທີ 17 ເຖິງ 26.

ແຕ່ກ່ອນ ເຂົາເຈົ້າເປັນຄົນບໍ່ເຊື່ອຖື ຜູ້ໄດ້ພະຍາຍາມທຳລາຍສາດສະໜາຈັກ, **ມຊຍ** 27:8–10 (ແອວ 36:6). ເຂົາເຈົ້າໄດ້ຖືກທູດຕິຕຽນ ແລະ ໄດ້ກັບໃຈ, **ມຊຍ** 27:11–12, 18–20. ເຂົາເຈົ້າໄດ້ຮັບອະນຸຍາດໄປສັ່ງສອນຊາວເລມັນ, **ມຊຍ** 28:1–7.

**ໂມໄຊຢາ, ລູກຊາຍຂອງເບັນຢາມິນ.** *ເບິ່ງ* ເບັນຢາມິນ, ບິດາຂອງໂມໄຊຢາ; ໂມໄຊຢາ, ພວກລູກຊາຍຂອງ *ນຳອີກ*

ກະສັດ ແລະ ສາດສະດາຊາວນີໄຟທີ່ຊອບທຳໃນພຣະຄຳພີມໍມອນ. ໂມໄຊຢາໄດ້ເຮັດຕາມຕົວຢ່າງທີ່ຊອບທຳຂອງບິດາຂອງເພິ່ນ (ມຊຍ 6:4–7). ເພິ່ນໄດ້ແປແຜ່ນຈາລຶກຄຳຊາວສີ່ແຜ່ນທີ່ບັນຈຸບັນທຶກຂອງຊາວຢາເຣັດ (ມຊຍ 28:17).

*ໜັງສືໂມໄຊຢາ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີມໍມອນ. ບົດທີ 1–6 ບັນຈຸຄຳເທດສະໜາທີ່ມີພະລັງຂອງກະສັດເບັນຢາມິນ ຕໍ່ຜູ້ຄົນຂອງເພິ່ນ. ພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ສຳພັດໃຈຂອງພວກເຂົາ ແລະ ຜູ້ຄົນໄດ້ປ່ຽນໃຈເຫລື້ອມໃສ ແລະ ປາດຖະໜາທີ່ຈະບໍ່ເຮັດຄວາມຊົ່ວອີກຕໍ່ໄປ. ບົດທີ 7–8 ບອກເຖິງຊາວນີໄຟກຸ່ມໜຶ່ງ ຜູ້ໄດ້ໄປອາໄສຢູ່ໃນບັນດາຊາວເລມັນ. ຜູ້ຄົນກຸ່ມໜຶ່ງໄດ້ຖືກສົ່ງໄປຊອກຫາພວກເຂົາ. ຫົວໜ້າກຸ່ມຂອງພວກໄປຊອກທີ່ຊື່ອຳໂມນໄດ້ພົບເຫັນພວກເຂົາ ແລະ ໄດ້ຮຽນຮູ້ເລື່ອງລາວກ່ຽວກັບບັນຫາຂອງພວກເຂົາພາຍໃຕ້ກົດບັງຄັບຂອງຊາວເລມັນ. ບົດທີ 9–24 ບັນຍາຍເລື່ອງກົດບັງຄັບ ແລະ ເຖິງວິທີທີ່ຜູ້ນຳຂອງພວກເຂົາ—ຊີນິບ, ໂນອາ, ແລະ ລິມໄຮ—ໄດ້ໃຊ້ຊີວິດຢູ່ໃຕ້ຊາວເລມັນ. ການຕາຍຍ້ອນຄວາມເຊື່ອຂອງສາດສະດາຊື່ ອະບີນາໄດ ກໍໄດ້ຖືກບັນທຶກໄວ້ຄືກັນ. ແອວມາໄດ້ປ່ຽນໃຈເຫລື້ອມໃສຕອນອະບີນາໄດຖືກນຳຂຶ້ນສານ. ບົດທີ 25–28 ເລົ່າເລື່ອງລາວກ່ຽວກັບສາເຫດທີ່ລູກຊາຍຂອງແອວມາ ແລະ ລູກຊາຍສີ່ຄົນຂອງກະສັດໂມໄຊຢາ ໄດ້ປ່ຽນໃຈເຫລື້ອມໃສ. ໃນ ບົດທີ 29 ກະສັດໂມໄຊຢາໄດ້ແນະນຳວ່າ ໃຫ້ຈັດຕັ້ງລະບົບການຕັດສິນ ແທນການມີກະສັດ. ແອວມາ ລູກຊາຍຂອງແອວມາ ໄດ້ຖືກແຕ່ງຕັ້ງເປັນຫົວໜ້າຜູ້ຕັດສິນຄົນທຳອິດ.

**ໂມໂຣໄນ, ນາຍທັບ.** *ເບິ່ງ* ປ້າຍແຫ່ງເສລີພາບ *ນຳອີກ*

ໃນພຣະຄຳພີມໍມອນ, ຜູ້ບັງຄັບບັນຊາກອງທັບຂອງຊາວນີໄຟ ຜູ້ໄດ້ມີຊີວິດຢູ່ປະມານ 100 ປີ ກ່ອນ ຄ.ສ.

ໂມໂຣໄນໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້ານາຍທະຫານທັງໝົດຂອງຊາວນີໄຟ, **ແອວ** 43:16–17. ໄດ້ດົນໃຈທະຫານຊາວນີໄຟໃຫ້ຕໍ່ສູ້ເພື່ອເສລີພາບຂອງພວກເຂົາ, **ແອວ** 43:48–50. ໄດ້ເຮັດປ້າຍແຫ່ງເສລີພາບຈາກເສື້ອຄຸມຂອງເພິ່ນ, **ແອວ** 46:12–13. ເປັນຄົນຂອງພຣະເຈົ້າ, **ແອວ** 48:11–18. ໄດ້ຄຽດແຄ້ນໃຫ້ຝ່າຍຜູ້ປົກຄອງ ຍ້ອນວ່າເຂົາເຈົ້າບໍ່ເອົາຫົວຊາກ່ຽວກັບອິດສະລະພາບຂອງປະເທດຊາດຂອງຕົນ, **ແອວ** 59:13.

**ໂມໂຣໄນ, ລູກຊາຍຂອງມໍມອນ.** *ເບິ່ງ* ພຣະຄຳພີມໍມອນ; ມໍມອນ, ສາດສະດາຊາວນີໄຟ *ນຳອີກ*

ສາດສະດາ ຄົນ ສຸດທ້າຍ ໃນ ພຣະ ຄຳ ພີ ມໍມອນ (ປະມານ ຄ.ສ. 421). ກ່ອນມໍມອນໃກ້ເສຍຊີວິດໄປ, ເພິ່ນໄດ້ເອົາບັນທຶກປະຫວັດສາດທີ່ເອີ້ນວ່າ ແຜ່ນຈາລຶກຂອງມໍມອນ ໄປໃຫ້ໂມໂຣໄນ ລູກຊາຍຂອງເພິ່ນ (ຄມ 1:1). ໂມໂຣໄນໄດ້ສຳເລັດການຮຽບຮຽງແຜ່ນຈາລຶກຂອງມໍມອນ. ເພິ່ນໄດ້ຕື່ມ ບົດທີ 8 ແລະ 9 ໃສ່ໃນພຣະຄຳພີມໍມອນ (ມມ 8:1). ເພິ່ນໄດ້ຫຍໍ້ ແລະ ສະຫລຸບໜັງສືອີເທີ (ອທ 1:1–2) ແລະ ໄດ້ຕື່ມໜັງສືຂອງເພິ່ນເອງໃສ່ ທີ່ເອີ້ນວ່າ ໜັງສືໂມໂຣໄນ (ມຣນ 1). ໂມໂຣໄນໄດ້ຜະນຶກແຜ່ນຈາລຶກ ແລະ ໄດ້ເຊື່ອງມັນໄວ້ໃນພູຄູໂມຣາ (ມມ 8:14; ມຣນ 10:2). ໃນປີ 1823 ໂມໂຣໄນໄດ້ຖືກສົ່ງມາໃນສະພາບທີ່ໄດ້ຟື້ນຄືນຊີວິດແລ້ວ ເພື່ອເປີດເຜີຍພຣະຄຳພີມໍມອນແກ່ໂຈເຊັບ ສະມິດ (ຄພ 27:5; ຈສ—ປ 1:30–42, 45). ເພິ່ນໄດ້ແນະນຳສາດສະດາໜຸ່ມແຕ່ລະປີ ນັບ ແຕ່ປີ 1823 ເຖິງ 1827 (ຈສ—ປ 1:54) ແລະ ໃນທີ່ສຸດ ກໍໄດ້ນຳແຜ່ນຈາລຶກມາໃຫ້ເພິ່ນໃນປີ 1827 (ຈສ—ປ 1:59). ຫລັງຈາກໄດ້ສຳເລັດການແປແລ້ວ ໂຈເຊັບ ສະມິດ ກໍໄດ້ສົ່ງແຜ່ນຈາລຶກຄືນໃຫ້ໂມໂຣໄນ.

*ໜັງສືໂມໂຣໄນ:* ໜັງສືເຫລັ້ມສຸດທ້າຍຢູ່ໃນພຣະຄຳພີມໍມອນ. ມັນຖືກຂຽນໂດຍສາດສະດາຊາວນີໄຟຄົນສຸດທ້າຍຊື່ ໂມໂຣໄນ. ບົດທີ 1–3 ບອກເຖິງຄວາມພິນາດເທື່ອສຸດທ້າຍຂອງຊາວນີໄຟ, ໃຫ້ຄຳແນະນຳກ່ຽວກັບການມອບພຣະວິນຍານບໍລິສຸດ ແລະ ຖານະປະໂລຫິດ. ບົດທີ 4–5 ໃຫ້ລາຍລະອຽດກ່ຽວກັບລະບຽບການທີ່ຖືກຕ້ອງຂອງການປະຕິບັດພິທີສິນລະລຶກ. ບົດທີ 6 ສະຫລຸບວຽກງານຂອງສາດສະໜາຈັກ. ບົດທີ 7–8 ຄຳເທດສະໜາກ່ຽວກັບຫລັກທຳຂໍ້ທຳອິດຂອງພຣະກິດຕິຄຸນ, ລວມທັງຄຳສອນຂອງມໍມອນເລື່ອງສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ ແລະ ກ່ຽວກັບວິທີທີ່ຈະຮູ້ວ່າສິ່ງໃດດີ ແລະ ສິ່ງໃດບໍ່ດີ (ມຣນ 7), ແລະ ຄຳອະທິບາຍຂອງມໍມອນວ່າ ເດັກນ້ອຍມີຊີວິດຢູ່ໃນພຣະຄຣິດ ແລະ ບໍ່ຈຳເປັນຕ້ອງຮັບການບັບຕິສະມາ (ມຣນ 8). ບົດທີ 9 ບັນຍາຍເຖິງຄວາມຊົ່ວຮ້າຍຂອງປະຊາຊາດນີໄຟ. ບົດທີ 10 ເປັນຂ່າວສານສຸດທ້າຍຂອງໂມໂຣໄນ ແລະ ຮ່ວມດ້ວຍວິທີທີ່ຈະຮູ້ຈັກຄວາມຈິງເລື່ອງພຣະຄຳພີມໍມອນ (ມຣນ 10:3–5).

**ໂມໂຣໄນຮາ, ລູກຊາຍຂອງນາຍທັບໂມໂຣໄນ**

ຜູ້ບັງຄັບບັນຊາທີ່ຊອບທຳຊາວນີໄຟຢູ່ໃນພຣະຄຳພີມໍມອນ (ປະມານ 60 ປີ ກ່ອນ ຄ.ສ.).

ໂມໂຣໄນໄດ້ມອບກອງທັບທະຫານໃຫ້ແກ່ໂມໂຣໄນຮາ ລູກຊາຍຂອງເພິ່ນ, **ແອວ** 62:43. ໄດ້ຍຶດເອົາເມືອງເຊຣາເຮັມລາຄືນອີກ, **ຮລມ** 1:33. ໄດ້ນຳຊາວນີໄຟຄືນມາກັບໃຈ ແລະ ໄດ້ຍຶດເອົາແຜ່ນດິນຈຳນວນເຄິ່ງໜຶ່ງຄືນມາ, **ຮລມ** 4:14–20.

**ໂມໂຫ, ຄວາມໂມໂຫ.** *ເບິ່ງ* ຄຽດແຄ້ນ, ຄວາມຄຽດແຄ້ນ

**ໂມອາບ.** *ເບິ່ງ* ໂລດ *ນຳອີກ*

ແຜ່ນດິນໃນສະໄໝຂອງພຣະຄຳພີເດີມ ທີ່ຕັ້ງຢູ່ທາງຕາເວັນອອກຂອງທະເລຕາຍ. ຊາວໂມອາບເປັນລູກຫລານຂອງໂລດ ແລະ ເປັນເຊື້ອສາຍຂອງຊາວອິດສະຣາເອນ. ພວກເຂົາເວົ້າພາສາທີ່ຄ້າຍຄືກັນກັບພາສາເຮັບເຣີ. ມີການສູ້ຮົບກັນຕະຫລອດເວລາລະຫວ່າງຊາວໂມອາບ ແລະ ຊາວອິດສະຣາເອນ (ຜປ 3:12–30; 11:17; 2 ຊມອ 8:2; 2 ກສ 3:6–27; 2 ຂຄ 20:1–25; ອຊຢ 15).

**ມໍມອນ.** *ເບິ່ງ* ສາດສະໜາຈັກຂອງພຣະເຢຊູຄຣິດ; ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ *ນຳອີກ*

ຊື່ຫລິ້ນທີ່ວ່າ ມໍມອນ ແມ່ນຖືກເອີ້ນໂດຍຜູ້ຄົນທີ່ບໍ່ໄດ້ເປັນສະມາຊິກຂອງສາດສະໜາຈັກ ທີ່ກ່າວເຖິງສະມາຊິກຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ. ຊື່ນີ້ມາຈາກ ໜັງສືພຣະຄຳພີທີ່ສັກສິດ ຊຶ່ງຖືກຮຽບຮຽງໂດຍສາດສະດາມໍມອນໃນສະໄໝ

ບູຮານ ແລະ ມີຊື່ວ່າ ພຣະຄຳພີມໍມອນ. ຊື່ທີ່ພຣະຜູ້ເປັນເຈົ້າໄດ້ມອບໃຫ້ແກ່ສະມາຊິກຂອງສາດສະໜາຈັກ ທີ່ຮູ້ຈັກກັນດີແມ່ນ "ໄພ່ພົນຂອງພຣະເຈົ້າ." ຊື່ທີ່ຖືກຕ້ອງຂອງສາດສະໜາຈັກແມ່ນ ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.

**ມໍມອນ, ສາດສະດາຊາວນີໄຟ.** *ເບິ່ງ* ພຣະຄຳພີມໍມອນ *ນຳອີກ*

ສາດສະດາຊາວນີໄຟ, ນາຍທັບ, ແລະ ຜູ້ຮັກສາບັນທຶກໃນພຣະຄຳພີມໍມອນ. ມໍມອນໄດ້ມີຊີວິດຢູ່ປະມານ ຄ.ສ. 311–385 (ມມ 1:2, 6; 6:5–6; 8:2–3). ເພິ່ນເປັນຫົວໜ້າກອງທັບເກືອບຕະຫລອດຊີວິດຂອງເພິ່ນ, ເລີ່ມຕົ້ນແຕ່ອາຍຸສິບຫ້າປີ (ມມ 2:1–2; 3:8–12; 5:1; 8:2–3). ອາມມາຣອນໄດ້ແນະນຳມໍມອນໃຫ້ຕຽມຕົນເອງ ໃນການຮັກສາຂຽນ ແລະ ການຮັກສາບັນທຶກ (ມມ 1:2–5; 2:17–18). ຫລັງຈາກໄດ້ບັນທຶກຊີວະປະຫວັດໃນວັນເວລາຂອງເພິ່ນແລ້ວ, ມໍມອນໄດ້ຫຍໍ້ແຜ່ນຈາລຶກໃຫຍ່ຂອງນີໄຟ ໄວ້ໃນແຜ່ນຈາລຶກຂອງມໍມອນ. ຕໍ່ມາເພິ່ນໄດ້ມອບບັນທຶກທີ່ສັກສິດນີ້ໃຫ້ແກ່ໂມໂຣໄນ ລູກຊາຍຂອງເພິ່ນ. ແຜ່ນຈາລຶກເຫລົ່ານີ້ເປັນພາກສ່ວນໜຶ່ງຂອງບັນທຶກທີ່ໂຈເຊັບ ສະມິດ ໄດ້ແປເປັນພຣະຄຳພີມໍມອນ.

*ຄຳຂອງມໍມອນ:* ໜັງສືເຫລັ້ມນ້ອຍໃນພຣະຄຳພີມໍມອນ. ລະຫວ່າງຄຳສຸດທ້າຍຂອງອາມາລະໄຄ ໃນໜັງສືອອມໄນ ແລະ ຄຳທຳອິດໃນໜັງສືໂມໄຊຢາ, ມໍມອນ, ບັນນາທິການຂອງບັນທຶກທຸກທັງໝົດ, ໄດ້ສອດໜັງສືເຫລັ້ມນ້ອຍນີ້ໃສ່ທາງກາງ. (ເບິ່ງ "ຄຳອະທິບາຍຫຍໍ້ກ່ຽວກັບພຣະຄຳພີມໍມອນ" ຢູ່ໃນທາງໜ້າຂອງພຣະຄຳພີມໍມອນ.)

*ພຣະຄຳພີມໍມອນ:* ໜັງສືອີກເຫລັ້ມໜຶ່ງໃນບັນດາພຣະຄຳພີ ທີ່ຮູ້ຈັກກັນວ່າ ພຣະຄຳພີມໍມອນ. ບົດທີ 1–2 ບອກເຖິງອາມມາຣອນ, ສາດສະດາຂອງຊາວນີໄຟ, ໄດ້ບອກມໍມອນເຖິງເວລາ ແລະ ສະຖານທີ່ ບ່ອນທີ່ໃຫ້ໄປເອົາແຜ່ນຈາລຶກ. ພ້ອມນີ້, ມີສົງຄາມທີ່ຍິ່ງໃຫຍ່ໄດ້ເກີດຂຶ້ນ, ແລະ ຊາວນີໄຟສາມຄົນໄດ້ຖືກພາໜີໄປ ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ. ບົດທີ 3–4 ບອກເຖິງມໍມອນເອີ້ນໃຫ້ຜູ້ຄົນກັບໃຈ: ແຕ່ພວກເຂົາມີໃຈແຂງເກີນກວ່າທີ່ຈະຮູ້ສຶກ, ແລະ ຄວາມຊົ່ວຮ້າຍໄດ້ເກີດຂຶ້ນຫລາຍກວ່າທີ່ຜ່ານມາໃນອິດສະຣາເອນ. ບົດທີ 5–6 ບັນທຶກການສູ້ຮົບຄັ້ງສຸດທ້າຍລະຫວ່າງຊາວນີໄຟ ແລະ ຊາວເລມັນ. ມໍມອນໄດ້ຖືກຂ້າພ້ອມດ້ວຍປະຊາຊາດນີໄຟເກືອບທັງໝົດ. ໃນ ບົດທີ 7, ກ່ອນເພິ່ນເສຍຊີວິດ, ມໍມອນໄດ້ເອີ້ນຜູ້ຄົນ—ໃນຕອນນັ້ນ ແລະ ໃນ ອະນາຄົດ—ໃຫ້ກັບໃຈ. ບົດທີ 8–9 ບັນທຶກບອກວ່າ ໃນທີ່ສຸດພຽງແຕ່ໂມໂຣໄນ ລູກຊາຍຂອງມໍມອນເທົ່ານັ້ນທີ່ຍັງມີຊີວິດຢູ່. ເພິ່ນໄດ້ບັນທຶກພາບສຸດທ້າຍຂອງການຕາຍ ແລະ ຊາກສົບ, ລວມທັງການສິ້ນສຸດຂອງຜູ້ຄົນຊາວນີໄຟ, ແລະ ໄດ້ຂຽນຂ່າວສານເຖິງຄົນລຸ້ນຫລັງ ແລະ ຜູ້ອ່ານຂອງບັນທຶກນີ້.

**ມໍມອນ, ພຣະຄຳພີ.** *ເບິ່ງ* ພຣະຄຳພີມໍມອນ

**ເມືອງນາວູ, ລັດອີລີນອຍ (ສະຫະລັດອາເມຣິກາ)**

ເມືອງໜຶ່ງທີ່ໄດ້ຖືກສ້າງຂຶ້ນໂດຍໄພ່ພົນຍຸກສຸດທ້າຍ ໃນປີ 1839 ໃນລັດອີລີນອຍ. ມັນຕັ້ງຢູ່ແຄມແມ່ນ້ຳມິດຊີຊິບປີ, ເກືອບເປັນໄລຍະຍາວເຖິງສອງຮ້ອຍໄມ (320 ກິໂລແມັດ) ເລີຍແມ່ນ້ຳຂຶ້ນໄປ ຈາກເມືອງເຊັ້ນຫລຸຍ.

ເພາະການຂົ່ມເຫັງຢູ່ໃນລັດມີເຊີຣີ, ໄພ່ພົນຂອງພຣະເຈົ້າຈຶ່ງໄດ້ຍ້າຍຂຶ້ນໄປທາງພາກເໜືອທີ່ໄກປະມານສອງຮ້ອຍໄມ, ຂ້າມແມ່ນ້ຳມິດຊີຊິບປີ, ແລະ ເຂົ້າໄປຫາລັດອີລີນອຍ, ບ່ອນທີ່ເຂົາເຈົ້າພົບເຫັນສະພາບທີ່ໜ້າພໍໃຈ. ໃນທີ່ສຸດ, ໄພ່ພົນຂອງພຣະເຈົ້າກໍໄດ້ຊື້ທີ່ດິນທີ່ຍັງບໍ່ໄດ້ພັດທະນາຂອງເມືອງຄອມເມີສ. ທີ່ດິນຕອນນີ້ແທ້ຈິງແລ້ວເປັນບຶງ ແລະ ມີອາຄານຕັ້ງຢູ່ສອງສາມບ່ອນ. ໄພ່ພົນຂອງພຣະເຈົ້າໄດ້ດູດນ້ຳອອກຈາກບຶງ ແລະ ໄດ້ສ້າງເຮືອນຂຶ້ນ. ໂຈເຊັບ ສະມິດ ໄດ້ຍ້າຍຄອບຄົວຂອງເພິ່ນໄປຢູ່ໃນເຮືອນນ້ອຍທີ່ເຮັດດ້ວຍໄມ້ທ່ອນ. ຊື່ຂອງເມືອງຄອມເມີສໄດ້ປ່ຽນເປັນເມືອງນາວູ, ຕາມພາສາເຮັບເຣີ ສຳລັບຄຳວ່າ "ສວຍງາມ."

ຫລາຍ ພາກ ໃນ ພຣະ ຄຳ ພີ ຄຳ ສອນ ແລະ ພັນທະ ສັນ ຍາ ໄດ້ ຖືກ ຂຽນ ຢູ່ ໃນ ເມືອງ ນາວູ (ຄພ 124–129; 132; 135). ໄພ່ພົນຂອງພຣະເຈົ້າໄດ້ຖືກສັ່ງໃຫ້ສ້າງພຣະວິຫານຢູ່ໃນເມືອງນາວູ (ຄພ 124:26–27). ເຂົາເຈົ້າໄດ້ສ້າງພຣະວິຫານ ແລະ ໄດ້ຈັດຕັ້ງສະເຕກຂອງຊີໂອນຂຶ້ນກ່ອນເຂົາເຈົ້າຖືກຂັບໄລ່ໜີຈາກບ້ານເຮືອນຂອງເຂົາເຈົ້າໃນປີ 1846. ເພາະການຂົ່ມເຫັງນີ້, ໄພ່ພົນຂອງພຣະເຈົ້າຈຶ່ງໄດ້ໜີຈາກເຂດນີ້ ແລະ ໄດ້ເດີນທາງໄປຫາພາກຕາເວັນຕົກ.

**ເມືອງເຟແອດ, ລັດນິວຢອກ (ສະຫະລັດອາເມຣິກາ)**

ພື້ນທີ່ເຮັດຮົ້ວສວນທີ່ພີເຕີ ວິດເມີ ຜູ້ພໍ່, ບ່ອນທີ່ສາດສະດາ ໂຈເຊັບ ສະມິດ ໄດ້ຮັບການເປີດເຜີຍຫລາຍຢ່າງ. ສາດສະໜາຈັກໄດ້ຈັດຕັ້ງຂຶ້ນຢູ່ທີ່ນີ້ໃນວັນທີ 6 ເດືອນເມສາ, 1830 ແລະ ຜູ້ຄົນໄດ້ຍິນສຸລະສຽງຂອງພຣະຜູ້ເປັນເຈົ້າ (ຄພ 128:20).

**ມົ້ວສຸມ, ການມົ້ວສຸມ.** *ເບິ່ງ* ການມົ້ວສຸມລັບ

**ໄມ້ກາງແຂນ.** *ເບິ່ງ* ຄຶງ, ການຄຶງ; ໂຄລະໂຄທາ; ສິນລະລຶກ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ *ນຳອີກ*

ຫລັກ ໄມ້ທີ່ ໃຊ້ຄຶງພຣະ ເຢຊູຄຣິດ (ມຣກ 15:20–26). ຫລາຍຄົນຢູ່ໃນໂລກຕອນນີ້ຄິດວ່າ ມັນ ເປັນ ເຄື່ອງໝາຍ ຂອງການຄຶງ ແລະ ການເສຍສະລະຊົດໃຊ້ຂອງພຣະຄຣິດ; ເຖິງຢ່າງໃດກໍຕາມ, ພຣະຜູ້ເປັນ ເຈົ້າໄດ້ຈັດຕັ້ງເຄື່ອງໝາຍສຳລັບການຄຶງ ແລະ ການເສຍສະລະ ຂອງພຣະ ອົງ ໄວ້ ແລ້ວ—ນັ້ນ ຄື ເຂົ້າຈີ່ ແລະ ນ້ຳຂອງສິນລະລຶກ (ມທ 26:26–28; ຄພ 20:40, 75–79). ໃນພຣະຄຳພີ, ຄົນທີ່ຮັບເອົາ ໄມ້ກາງ ແຂນ ແລະ ຄົນທີ່ຮັກພຣະເຢຊູຄຣິດຫລາຍທີ່ສຸດຈົນວ່າເຂົາເຈົ້າປະຕິເສດຕົນເອງຈາກຄວາມບໍ່ເປັນເໝືອນພຣະເຈົ້າ ແລະ ຄວາມໄຄ່ທັງໝົດຂອງໂລກ ແລ້ວຮັກສາພຣະບັນຍັດຂອງພຣະອົງ (ປຈສ, ມທ 16:25–26 [ພາກທ້ອຍທ້າຍ]).

ຈົ່ງແບກໄມ້ກາງແຂນ, ແລ້ວຕາມເຮົາມາ, **ມຣກ** 10:21 (3 ນຟ 12:30; ຄພ 23:6). ພຣະເຢຊູໄດ້ອົດທົນຕໍ່ໄມ້ກາງແຂນ ແລະ ປະທັບລົງເບື້ອງຂວາພຣະທີ່ນັ່ງຂອງພຣະເຈົ້າ, **ຮຣ** 12:2.

ພຣະອົງຖືກຍົກຂຶ້ນເທິງໄມ້ກາງແຂນ ແລະ ຖືກປະຫານເພື່ອບາບຂອງໂລກ, **1 ນຟ** 11:33. ຄົນທີ່ອົດທົນຕໍ່ໄມ້ກາງແຂນຂອງໂລກມາແລ້ວຈະໄດ້ຮັບອານາຈັກຂອງພຣະເຈົ້າມາເປັນມູນມໍລະດົກ, **2 ນຟ** 9:18. ພຣະບິດາຂອງເຮົາໄດ້ສົ່ງເຮົາມາເພື່ອວ່າເຮົາຈະໄດ້ຖືກຍົກຂຶ້ນເທິງໄມ້ກາງແຂນ, **3 ນຟ** 27:14–15.

ຄົນໃດທີ່ຈະບໍ່ແບກໄມ້ກາງແຂນຂອງເຂົາ ແລະ ຕິດຕາມເຮົາໄປ, ແລະ ຮັກສາພຣະບັນຍັດຂອງເຮົາ, ຄົນໆນັ້ນຈະບໍ່ລອດ, **ຄພ** 56:2.

ຈົ່ງເບິ່ງບຸດມະນຸດຖືກຍົກຂຶ້ນເທິງໄມ້ກາງແຂນ, **ມຊ** 7:55.

**ຍັງ, ບຣິກຳ**

ອັກຄະສາວົກໃນຍຸກສະໄໝເລີ່ມຕົ້ນ ແລະ ເປັນປະທານຄົນທີສອງຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ. ເພິ່ນໄດ້ນຳພາໄພ່ພົນຂອງພຣະເຈົ້າໄປທາງຕາເວັນຕົກຈາກເມືອງນາວູ, ລັດອິລິນອຍ, ຫາຮ່ອມພູເມືອງເຊົາເລັກ ແລະ ເປັນກຸ່ມຕັ້ງຖິ່ນຖານທີ່ໃຫຍ່ໂຕ ໃນພາກຕາເວັນຕົກ ຂອງສະຫະລັດອາເມຣິກາ.

ບຣິກຳ ຍັງ ໄດ້ ຖືກເອີ້ນໃຫ້ເປັນປະທານຂອງກຸ່ມອັກຄະສາວົກສິບສອງ, **ຄພ** 124:127. ບຣິກຳ ຍັງ ໄດ້ຖືກຍົກຍ້ອງສຳລັບວຽກງານຂອງເພິ່ນ ແລະ ຖືກປົດຈາກການເດີນທາງໄປທົ່ວໃນອະນາຄົດ, **ຄພ** 126. ພຣະຜູ້ເປັນເຈົ້າໄດ້ແນະນຳບຣິກຳ ຍັງ ເຖິງວິທີຈັດລະບຽບໄພ່ພົນຍຸກສຸດທ້າຍ ສຳລັບການເດີນທາງໄປຫາພາກຕາເວັນຕົກ, **ຄພ** 136. ບຣິກຳ ຍັງ ເປັນຜູ້ໜຶ່ງທີ່ຖືກໂປດປານ ໃນໂລກວິນຍານ, **ຄພ** 138:53.

**ຢາໂກໂບ, ນ້ອງຊາຍຂອງພຣະຜູ້ເປັນເຈົ້າ**

ໃນພຣະຄຳພີໃໝ່, ນ້ອງຊາຍຂອງພຣະຜູ້ເປັນເຈົ້າ (ຄລຕ 1:19) ແລະ ເປັນອ້າຍຂອງໂຢເຊັບ, ຊີໂມນ, ຢູດາ ແລະ ນ້ອງສາວຫລາຍ

ຄົນ (ມທ 13:55–56; ມຣກ 6:3; ຢູດາ 1:1). ລາວຍັງເປັນທີ່ຮູ້ຈັກອີກວ່າ ເປັນຢາໂກໂບຜູ້ທີ່ທ່ຽງທຳ ແລະ ມີຕຳແໜ່ງທີ່ສຳຄັນຢູ່ໃນສາດສະໜາຈັກ ໃນເຢຣູຊາເລັມ (ກຈກ 12:17; 15:13; 1 ກຣທ 15:7; ຄລຕ 2:9–12). ບາງທີລາວໄດ້ເປັນຜູ້ຂຽນສານຂອງຢາໂກໂບ.

*ສານຂອງຢາໂກໂບ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີໃໝ່. ສະບັບຕົ້ນແມ່ນເປັນຈົດໝາຍທີ່ຂຽນເຖິງສິບສອງເຜົ່າຂອງອິດສະຣາເອນທີ່ໄດ້ກະຈັດກະຈາຍໄປທົ່ວ ແລະ ບາງທີອາດຖືກຂຽນຈາກເຢຣູຊາເລັມ. ສານນີ້ບັນຈຸຄວາມແຈ່ມແຈ້ງບາງຢ່າງກ່ຽວກັບການປະຕິບັດທາງສາດສະໜາ, ລວມທັງຄວາມສຳຄັນຂອງຄຳແນະນຳໃນ ບົດທີ 1 ທີ່ວ່າຖ້າຫາກຄົນໃດຂາດສະຕິປັນຍາ, ກໍໃຫ້ຄົນນັ້ນທູນຖາມພຣະເຈົ້າເພື່ອຂໍຄວາມຊ່ວຍເຫລືອ (ຢກບ 1:5–6; ຈສ—ປ 1:9–20). ບົດທີ 2 ກ່ຽວຂ້ອງກັບສັດທາ ແລະ ວຽກງານ. ບົດທີ 3–4 ກ່າວເຖິງຄວາມສຳຄັນຂອງການບັງຄັບລີ້ນ ແລະ ຕັກເຕືອນໄພ່ພົນຂອງພຣະເຈົ້າບໍ່ໃຫ້ກ່າວຄຳບໍ່ດີຕໍ່ກັນ. ບົດທີ 5 ໄດ້ຊຸກຍູ້ໄພ່ພົນຂອງພຣະເຈົ້າໃຫ້ມີຄວາມອົດທົນ ແລະ ທີ່ຈະເອີ້ນແອວເດີເພື່ອໃຫ້ພອນແກ່ຄົນເຈັບປ່ວຍ; ມັນຍັງສິດສອນອີກເຖິງພອນເລື່ອງການຊ່ວຍປ່ຽນໃຈເຫລື້ອມໃສຄົນອື່ນໆ.

**ຢາໂກໂບ, ລູກຊາຍຂອງເສເບດາຍ**

ຄົນໜຶ່ງໃນບັນດາອັກຄະສາວົກສິບສອງທີ່ພຣະເຢຊູໄດ້ເລືອກໃນໄລຍະການປະຕິບັດສາດສະໜາກິດ ໃນຊ່ວງມະຕະຂອງພຣະອົງ. ລາວເປັນອ້າຍຂອງໂຢຮັນ. ລາວເປັນຄົນໜຶ່ງໃນບັນດາອັກຄະສາວົກສາມຄົນທີ່ພຣະເຢຊູໄດ້ເລືອກ ໃນໂອກາດພິເສດໂດຍສະເພາະ: ການນຳລູກສາວຂອງຢາອີໂຣຄືນມາມີຊີວິດອີກ (ມຣກ 5:37), ຕອນປ່ຽນສະພາບ (ມທ 17:1; ມຣກ 9:2; ລກ 9:28), ແລະ ທີ່ສວນເຄັດເຊມາເນ (ມທ 26:37; ມຣກ 14:33). ພ້ອມດ້ວຍເປໂຕ ແລະ ໂຢຮັນ, ລາວໄດ້ຟື້ນຟູຖານະປະໂລຫິດແຫ່ງເມນຄີເສເດັກຄືນມາສູ່ແຜ່ນດິນໂລກ ໂດຍການແຕ່ງຕັ້ງໂຈເຊັບ ສະມິດ ແລະ ອໍລິເວີ ຄາວເດີຣີ (ຄພ 27:12; 128:20; ຈສ—ປ 1:72).

**ຢາໂກໂບ, ລູກຊາຍຂອງອາລະຟາຍ**

ຄົນໜຶ່ງໃນບັນດາອັກຄະສາວົກສິບສອງທີ່ພຣະເຢຊູໄດ້ເລືອກໃນໄລຍະການປະຕິບັດສາດສະໜາກິດ ໃນຊ່ວງມະຕະຂອງພຣະອົງ (ມທ 10:3; ມຣກ 3:18; ລກ 6:15; ກຈກ 1:13).

**ຢາໂຄບ, ລູກຊາຍຂອງລີໄຮ.** *ເບິ່ງ* ລີໄຮ, ບິດາຂອງນີໄຟ *ນຳອີກ*

ສາດສະດາໃນພຣະຄຳພີມໍມອນ ແລະ ເປັນຜູ້ຂຽນຄຳເທດສະໜາຫລາຍບົດຢູ່ໃນໜັງສື 2 ນີໄຟ ແລະ ຢາໂຄບ (2 ນຟ 6–11; ຢຄ 1–7).

*ໜັງສືຢາໂຄບ:* ໜັງສືເຫລັ້ມທີສາມຢູ່ໃນພຣະຄຳພີມໍມອນ. ບົດທີ 1 ບອກວ່າ ນີໄຟໄດ້ມອບແຜ່ນຈາລຶກໃຫ້ແກ່ຢາໂຄບ ແລະ ຈາກນັ້ນໄດ້ແຕ່ງຕັ້ງ ຢາໂຄບ ແລະ ໂຢເຊັບ ນ້ອງຊາຍຂອງເພິ່ນໃຫ້ເປັນປະໂລຫິດ ແລະ ຄູສອນຜູ້ຄົນ. ບົດທີ 2–4 ຄຳເທດສະໜາແນະນຳຜູ້ຄົນໃຫ້ມີຄວາມສະອາດທາງສິນທຳ. ຢາໂຄບຍັງໄດ້ສິດສອນກ່ຽວກັບການສະເດັດມາຂອງພຣະເມຊີອາພຣະຜູ້ໄຖ່, ແລະ ເພິ່ນໄດ້ໃຫ້ເຫດຜົນກ່ຽວກັບວ່າ ເປັນຫຍັງຊາວອິດສະຣາເອນບາງຄົນຈຶ່ງບໍ່ຍອມຮັບພຣະອົງ ແລະ ການສະເດັດມາຂອງພຣະອົງ. ບົດທີ 5–6 ບັນຈຸປະຈັກພະຍານຂອງຢາໂຄບ ແລະ ໄດ້ທຳນາຍກ່ຽວກັບປະຫວັດສາດ ແລະ ພາລະກິດຂອງຜູ້ຄົນຂອງອິດສະຣາເອນ. ບົດທີ 7 ບັນຈຸເລື່ອງລາວຂອງຊາຍຄົນໜຶ່ງຊື່ ເຊເຣັມ ທີ່ກະບົດ, ຜູ້ໄດ້ຖືກເອົາຊະນະໃຈໂດຍປະຈັກພະຍານຂອງຢາໂຄບ.

**ຢາໂຄບ, ລູກຊາຍຂອງອີຊາກ.** *ເບິ່ງ* ອິດສະຣາເອນ; ອີຊາກ; ເອຊາວ *ນຳອີກ*

ປິຕຸ ແລະ ສາດສະດາໃນພຣະຄຳພີເດີມ; ລູກຊາຍຝາແຝດຜູ້ນ້ອງຂອງອີຊາກ ແລະ ນາງເຣເບກາ (ປຖກ 25:19–26). ຢາໂຄບໄດ້ຮັບສິດທິຂອງອ້າຍກົກຈາກເອຊາວ ອ້າຍຂອງລາວ. ສິ່ງນີ້ເກີດຂຶ້ນ ເພາະຄວາມມີຄ່າຄວນຂອງຢາໂຄບ ແລະ ໄດ້ແຕ່ງງານໃນພັນທະ

ສັນຍາ, ໃນຂະນະທີ່ເອຊາວກຽດຊັງສິດທິຂອງອ້າຍກົກຂອງລາວ ແລະ ໄດ້ແຕ່ງງານນອກພັນທະສັນຍາ (ປຖກ 25:30–34; 26:34–35; 27; 28:6–9; ຮຣ 12:16).

ເຣເບກາໄດ້ຮຽນຮູ້ຈາກພຣະຜູ້ເປັນເຈົ້າວ່າ ເອຊາວຈະຮັບໃຊ້ຢາໂຄບ, **ປຖກ** 25:23. ໄດ້ຊື້ສິດທິຂອງອ້າຍກົກຈາກເອຊາວ, **ປຖກ** 25:29–34. ໄດ້ຝັນເຫັນຂັ້ນໄດຂຶ້ນໄປສະຫວັນ, **ປຖກ** 28. ໄດ້ແຕ່ງງານກັບນາງເລອາ ແລະ ນາງຣາເຊັນ, **ປຖກ** 29:1–30. ມີລູກຊາຍສິບສອງຄົນ ແລະ ລູກສາວໜຶ່ງຄົນ, **ປຖກ** 29:31–30:24; 35:16–20. ໄດ້ແຕ່ງງານກັບນາງບິນຮາ ແລະ ນາງສີລະປາ, **ປຖກ** 30:3–4, 9. ໄດ້ປ່ຽນຊື່ເປັນ ອິດສະຣາເອນ, **ປຖກ** 32:28. ໄດ້ເຫັນພຣະເຈົ້າຕໍ່ໜ້າຕໍ່ຕາ, **ປຖກ** 32:30. ຮັກໂຢເຊັບຫລາຍ, **ປຖກ** 37:3. ໄດ້ໄປປະເທດເອຢິບກັບຄອບຄົວຂອງເພິ່ນ, **ປຖກ** 46:1–7. ໄດ້ອວຍພອນລູກຊາຍ ແລະ ລູກຫລານຂອງເພິ່ນ, **ປຖກ** 49. ໄດ້ຕາຍໄປ, **ປຖກ** 49:33.

ໄດ້ຮັກສາພຣະບັນຍັດ ແລະ ທຸກວັນນີ້ໄດ້ຮັບຄວາມສູງສົ່ງຢູ່ໃນບັນລັງຢູ່ສະຫວັນ, ຢູ່ພ້ອມກັບອັບຣາຮາມ ແລະ ອີຊາກ, **ຄພ** 132:37.

**ຢາດູດ.** *ເບິ່ງ* ພຣະວາຈາແຫ່ງປັນຍາ

**ຢາເຟດ.** *ເບິ່ງ* ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ *ນຳອີກ*

ລູກຊາຍກົກຂອງໂນອາ, ສາດສະດາໃນພຣະຄຳພີເດີມ (ມຊ 8:12).

ໂນອາມີລູກຊາຍຊື່ ຢາເຟດ, **ປຖກ** 5:32 (ປຖກ 6:10; ມຊ 8:12). ຢາເຟດ ແລະ ເມຍຂອງລາວໄດ້ເຂົ້າໄປໃນເຮືອຂອງໂນອາ, **ປຖກ** 7:13. ຢາເຟດໄດ້ອອກມາຈາກເຮືອ, **ປຖກ** 9:18. ພຣະເຈົ້າຈະຊ່ວຍຢາເຟດໃຫ້ມີເຊື້ອສາຍຢ່າງຫລວງຫລາຍ, **ປຖກ** 9:27.

**ຢາເຣັດ.** *ເບິ່ງ* ຊາວຢາເຣັດ; ຢາເຣັດ, ນ້ອງຊາຍຂອງ *ນຳອີກ*

ເປັນຜູ້ນຳຄົນໜຶ່ງໃນພຣະຄຳພີມໍມອນ, ຜູ້ຊຶ່ງພ້ອມດ້ວຍນ້ອງຊາຍຂອງລາວ, ໄດ້ນຳພາຜູ້ຄົນກຸ່ມໜຶ່ງໄປຈາກຫໍບາເບນ ໄປຫາແຜ່ນດິນແຫ່ງຄຳສັນຍາ ໃນຊີກໂລກເບື້ອງຕາເວັນຕົກ (ອທ 1:33–2:1).

ຢາເຣັດໄດ້ຂໍໃຫ້ນ້ອງຊາຍຂອງລາວອະທິຖານເພື່ອວ່າພຣະຜູ້ເປັນເຈົ້າຈະບໍ່ໄດ້ເຮັດໃຫ້ພາສາຂອງຄອບຄົວເຂົາເຈົ້າ ແລະ ໝູ່ເພື່ອນຂອງເຂົາເຈົ້າສັບສົນ, **ອທ** 1:34–37. ໄດ້ເດີນທາງໄປຫາທະເລ ແລະ ໄດ້ອາໄສຢູ່ໃນທີ່ນັ້ນເປັນເວລາສີ່ປີ, **ອທ** 2:13. ໄດ້ຂີ່ເຮືອໄປຫາແຜ່ນດິນແຫ່ງຄຳສັນຍາ, **ອທ** 6:4–12.

**ຢາເຣັດ, ນ້ອງຊາຍຂອງ.** *ເບິ່ງ* ຊາວຢາເຣັດ; ຢາເຣັດ *ນຳອີກ*

ສາດສະດາໃນພຣະຄຳພີມໍມອນ. ເພິ່ນກັບອ້າຍຂອງເພິ່ນໄດ້ສ້າງຕັ້ງປະຊາຊາດຢາເຣັດເມື່ອເຂົາເຈົ້າໄດ້ນຳພາຜູ້ຄົນອອກໄປຈາກຫໍບາເບນ ໄປຫາແຜ່ນດິນແຫ່ງຄຳສັນຍາ ໃນຊີກໂລກເບື້ອງຕາເວັນຕົກ (ອທ 1–6). ເພິ່ນເປັນຊາຍທີ່ມີສັດທາອັນຍິ່ງໃຫຍ່ ຈົນວ່າເພິ່ນໄດ້ກ່າວກັບພຣະຜູ້ເປັນເຈົ້າໜ້າຕໍ່ໜ້າ (ຄພ 17:1). ເລື່ອງລາວຂອງພຣະອົງໄດ້ຖືກບັນທຶກໄວ້ຢູ່ໃນໜັງສືອີເທີ.

ນ້ອງຊາຍຂອງຢາເຣັດເປັນຄົນຮ່າງໃຫຍ່ ແລະ ມີກຳລັງຫລາຍ, ແລະ ເປັນຜູ້ທີ່ໂປດປານທີ່ສຸດຂອງພຣະຜູ້ເປັນເຈົ້າ, **ອທ** 1:34. ເປັນເພາະສັດທາຂອງເພິ່ນ, ນ້ອງຊາຍຂອງຢາເຣັດຈຶ່ງໄດ້ເຫັນນິ້ວພຣະຫັດຂອງພຣະຜູ້ເປັນເຈົ້າ, **ອທ** 3:6–9 (ອທ 12:20). ພຣະຄຣິດໄດ້ສະແດງພຣະກາຍທາງວິນຍານແກ່ນ້ອງຊາຍຂອງຢາເຣັດ, **ອທ** 3:13–20. ບໍ່ເຄີຍມີເລື່ອງໃດທີ່ສະແດງໃຫ້ປະຈັກ ເປັນເລື່ອງທີ່ຍິ່ງໃຫຍ່ໄປກວ່າເລື່ອງທີ່ສະແດງໃຫ້ປະຈັກແກ່ນ້ອງຊາຍຂອງຢາເຣັດ, **ອທ** 4:4. ນ້ອງຊາຍຂອງຢາເຣັດໄດ້ເຕືອນຜູ້ຄົນຂອງເພິ່ນເລື່ອງກະສັດ, **ອທ** 6:22–23. ພຣະຜູ້ເປັນເຈົ້າໄດ້ສະແດງທຸກສິ່ງທັງໝົດຕໍ່ນ້ອງຊາຍຂອງຢາເຣັດ, **ອທ** 12:21. ນ້ອງຊາຍຂອງຢາເຣັດຍິ່ງໃຫຍ່ໃນການຂຽນ, **ອທ** 12:24. ຜ່ານສັດທາ ນ້ອງຊາຍຂອງຢາເຣັດໄດ້ຍ້າຍພູຊີຣິນ, **ອທ** 12:30.

**ຢ້ານກົວ, ຄວາມຢ້ານກົວ.** *ເບິ່ງ* ກ້າຫານ, ຄວາມກ້າຫານ, ຢ່າງກ້າຫານ; ຄາລະວະ, ຄວາມຄາລະວະ; ສັດທາ *ນຳອີກ*

ຄວາມຢ້ານກົວສາມາດມີຄວາມໝາຍສອງຢ່າງ: (1) ທີ່ຈະຢ້ານກົວພຣະເຈົ້າຄືການຮູ້ສຶກຄາລະວະ ແລະ ຢຳເກງພຣະອົງ ແລະ ເຊື່ອຟັງພຣະບັນຍັດຂອງພຣະອົງ; (2) ທີ່ຈະຢ້ານກົວມະນຸດ, ສິ່ງອັນຕະລາຍທາງມະຕະ, ຄວາມເຈັບປວດ, ແລະ ຄວາມຊົ່ວຮ້າຍ ເປັນຄວາມເກງກົວ ແລະ ຢ້ານສິ່ງເຫລົ່ານັ້ນຫລາຍ.

*ຄວາມຢ້ານກົວພຣະເຈົ້າ:* ຜູ້ຂ້າຄິດວ່າໃນທີ່ນີ້ຈະບໍ່ມີໃຜຢຳເກງພຣະເຈົ້າ, **ປຖກ** 20:11. ຈົ່ງຢຳເກງໃຫ້ກຽດພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ, **ພບຍ** 6:13 (ຢຊ 24:14; 1 ຊມອ 12:24). ຈົ່ງຮັບໃຊ້ພຣະຜູ້ເປັນເຈົ້າດ້ວຍຄວາມຢຳເກງ, **ພສສ** 2:11. ການຢຳເກງພຣະຜູ້ເປັນເຈົ້າເປັນການເລີ່ມຕົ້ນຂອງສະຕິປັນຍາ, **ພສສ** 111:10. ຈົ່ງຢຳເກງພຣະຜູ້ເປັນເຈົ້າເທົ່ານັ້ນ ແລະ ຈົ່ງຫລີກໜີຈາກຄວາມຊົ່ວຮ້າຍ, **ສພສ** 3:7. ຖ້າທ່ານຢຳເກງພຣະເຈົ້າທຸກສິ່ງກໍຈະເປັນໄປໂດຍດີ, **ປຍຈ** 8:12.

ຈົ່ງອົດສາພະຍາຍາມເພື່ອໃຫ້ໄດ້ຄວາມພົ້ນ ດ້ວຍຄວາມຢຳເກງ ແລະ ຕົວສັ່ນ, **ຟລປ** 2:12. ຈົ່ງຢຳເກງພຣະເຈົ້າ, ແລະ ສັນລະເສີນຄວາມຍິ່ງໃຫຍ່ຂອງພຣະອົງ, **ພນມ** 14:7 (ຄພ 88:104).

ສາດສະດາໄດ້ກະຕຸ້ນຜູ້ຄົນຢູ່ຕະຫລອດວັນເວລາ ໃຫ້ພວກເຂົາຢູ່ໃນຄວາມຢ້ານກົວພຣະຜູ້ເປັນເຈົ້າ, **ອນ** 1:23. ແອວມາ ແລະ ພວກລູກຊາຍຂອງໂມໄຊຢາໄດ້ລົ້ມລົງຢູ່ກັບພື້ນດິນ, ເພາະວ່າຄວາມຢ້ານກົວທີ່ເຂົາເຈົ້າມີຕໍ່ພຣະຜູ້ເປັນເຈົ້າ, **ແອວ** 36:7. ໃຫ້ເຮັດວຽກຂອງຄວາມລອດໃຫ້ຕົນດ້ວຍຄວາມຢ້ານກົວ ແລະ ຕົວສັ່ນ, **ມມ** 9:27.

ຄົນທີ່ບໍ່ຢ້ານກົວເຮົາ, ເຮົາຈະລົບກວນ ແລະ ເຮັດໃຫ້ຕົວສັ່ນ, **ຄພ** 10:56. ຄົນທີ່ຢ້ານກົວເຮົາຈະເຝົ້າຄອຍເຄື່ອງໝາຍແຫ່ງການມາຂອງບຸດມະນຸດ, **ຄພ** 45:39.

*ຄວາມຢ້ານກົວມະນຸດ:* ຢ່າຢ້ານເພາະເຮົາຄອຍເຝົ້າຮັກສາເຈົ້າ, **ປຖກ** 26:24 (ອຊຢ 41:10). ພຣະຜູ້ເປັນເຈົ້າສະຖິດຢູ່ນຳພວກເຮົາ: ຢ່າສູ່ຢ້ານ, **ຈບຊ** 14:9. ບໍ່ຕ້ອງຢ້ານ: ຝ່າຍຂອງພວກເຮົາມີຫລາຍກວ່າ, **2 ກສ** 6:16. ຂ້າພຣະອົງຈະບໍ່ຢ້ານ ມະນຸດລ້າໆເຮັດຫຍັງໃຫ້ໄດ້ແດ່, **ພສສ** 56:4. ຢ່າສູ່ຢ້ານເມື່ອຄົນກ່າວຫຍໍ້ຫຍັນນິນທາ, **ອຊຢ** 51:7 (2 ນຟ 8:7).

ພຣະເຈົ້າບໍ່ໄດ້ປະທານໃຈອັນຢ້ານກົວໃຫ້ແກ່ເຮົາ, **2 ຕມທ** 1:7. ຄວາມຮັກອັນຄົບບໍລິບູນກໍຂັບໄລ່ຄວາມຢ້ານທຸກຢ່າງອອກໄປ, **1 ຢຮ** 4:18 (ມຣນ 8:16).

ພວກລູກຊາຍຂອງຮີລາມັນບໍ່ໄດ້ຢ້ານຄວາມຕາຍ, **ແອວ** 56:46–48. ຄວາມຢ້ານກົວຕໍ່ຄວາມຕາຍເຕັມອີກຂອງຄົນຊົ່ວ, **ມມ** 6:7. ຢ່າຢ້ານກົວຕໍ່ອຳນາດຂອງມະນຸດ, **ມຣນ** 8:16.

ເຈົ້າບໍ່ຄວນຢ້ານກົວມະນຸດຫລາຍກວ່າພຣະເຈົ້າ, **ຄພ** 3:7 (ຄພ 30:1, 11; 122:9). ຢ່າຢ້ານກົວທີ່ຈະເຮັດຄວາມດີ, **ຄພ** 6:33. ຜູ້ໃດກໍຕາມທີ່ເປັນຂອງສາດສະໜາຈັກຂອງເຮົາບໍ່ຈຳເປັນຕ້ອງຢ້ານ, **ຄພ** 10:55. ຖ້າຫາກພວກເຈົ້າຕຽມພ້ອມ ພວກເຈົ້າຈະບໍ່ຢ້ານກົວ, **ຄພ** 38:30. ປົດເປືອງຄວາມຢ້ານກົວອອກຈາກຕົນ, **ຄພ** 67:10. ຈົ່ງເບີກບານເຖີດ, ແລະ ຢ່າສູ່ຢ້ານ, ເພາະເຮົາພຣະຜູ້ເປັນເຈົ້າຢູ່ກັບພວກເຈົ້າ, **ຄພ** 68:6. ຢ່າຢ້ານກົວສັດຕູຂອງພວກເຈົ້າ, **ຄພ** 136:17.

**ຢ່າຮ້າງ.** *ເບິ່ງ* ແຕ່ງງານ, ການແຕ່ງງານ *ນຳອີກ*

ການສິ້ນສຸດຂອງການແຕ່ງງານ ຜ່ານອຳນາດຂອງກົດໝາຍບ້ານເມືອງ ແລະ ຂອງຜູ້ນຳພາທາງສາດສະໜາ. ຕາມພຣະຄຳພີໃໝ່, ພຣະເຈົ້າໄດ້ອະນຸຍາດໃຫ້ມີການຢ່າຮ້າງຕາມເງື່ອນໄຂບາງຢ່າງ ເພາະຄວາມແຂງກະດ້າງຂອງຫົວໃຈຂອງຜູ້ຄົນ; ເຖິງຢ່າງໃດກໍຕາມ, ພຣະເຢຊູໄດ້ອະທິບາຍໄວ້ວ່າ, “ມັນບໍ່ໄດ້ເປັນແບບນັ້ນຕັ້ງແຕ່ຕົ້ນ” (ມທ 19:3–12). ຂໍ້ພຣະຄຳພີໄດ້ແນະນຳຕໍ່ຕ້ານການຢ່າຮ້າງໂດຍທົ່ວໄປ ແລະ ແນະນຳໃຫ້ສາມີພັນລະຍາຮັກແພງເອົາກັນໃນຄວາມຊອບທຳ (1 ກຣທ 7:10–12; ຄພ 42:22).

**ຢືນຢັນ, ການຢືນຢັນ.** *ເບິ່ງ* ມື, ການວາງ

**ຢູດາ, ອ້າຍຂອງຢາໂກໂບ**

ໃນ ພຣະ ຄຳ ພີ ໃໝ່, ຄົນ ໜຶ່ງ ໃນ ຈຳນ ວນ ອັກຄະສາວົກສິບສອງຄົນລຸ້ນທຳອິດຂອງພຣະເຢຊູຄຣິດ (ລກ 6:13–16). ບາງທີລາວອາດເປັນທີ່ຮູ້ຈັກກັນວ່າ ທາດາຍ ຜູ້ຮັກຊາດ (ມທ 10:2–4).

**ຢູດາ (ນ້ອງຊາຍຂອງພຣະເຢຊູ)**

ໃນພຣະຄຳພີໃໝ່, ນ້ອງຊາຍຄົນໜຶ່ງຂອງພຣະເຢຊູ ແລະ ບາງທີອາດເປັນຜູ້ຂຽນສານຂອງຢູດາ (ມທ 13:55; ຢດ 1:1).

*ສານ ຂອງ ຢູດາ:* ໜັງສືເຫລັ້ມນີ້ປະກອບດ້ວຍຈົດໝາຍ ຈາກຢູດາເຖິງໄພ່ພົນໃດໜຶ່ງຂອງພຣະເຈົ້າ ຜູ້ທີ່ອ່ອນແອໃນສັດທາ. ພວກເຂົາອ່ອນແອໂດຍຜູ້ທີ່ຢູ່ໃນບັນດາພວກເຂົາຜູ້ກ່າວວ່າເປັນຊາວຄຣິດສະຕຽນ ແຕ່ນະມັດສະການສາດສະໜາເພເກັນທີ່ຜິດສິນທຳ ແລະປະກາດວ່າຖືກຍົກເວັ້ນຈາກກົດທີ່ມີສິນທຳ. ຢູດາປາດຖະໜາທີ່ຈະໃຫ້ໄພ່ພົນຂອງພຣະເຈົ້າຕື່ນຂຶ້ນມາ ແລະ ຮູ້ຈັກເຖິງສິ່ງອັນຕະລາຍທາງວິນຍານ ແລະ ຊຸກຍູ້ພວກເຂົາໃຫ້ຊື່ສັດຕໍ່ໄປ.

ຂ່າວສານທີ່ເດັ່ນໃນຢູດາ ແມ່ນ ຂໍ້ທີ 6, ຊຶ່ງກ່ຽວກັບສົງຄາມໃນສະຫວັນ ແລະ ການຂັບໄລ່ລູຊິເຟີ ແລະ ບໍລິວານຂອງມັນອອກໄປຈາກສະພາວະກ່ອນມະຕະ (ອຣຣ 3:26–28), ແລະ ຂໍ້ທີ 14–15, ຊຶ່ງອ້າງເຖິງຄຳທຳນາຍຂອງເອນົກ.

**ຢູດາ (ລູກຊາຍຂອງຢາໂຄບ).** *ເບິ່ງ* ຊາວຢິວ; ພຣະຄຣິສຕະທຳຄຳພີ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ເປັນລູກຊາຍຄົນທີສີ່ຂອງ ຢາໂຄບກັບນາງ ເລອາ (ປຖກ 29:35; 37:26–27; 43:3, 8; 44:16; 49:8). ຢາໂຄບໄດ້ອວຍພອນຢູດາວ່າລາວຈະເປັນຜູ້ນຳໂດຍທຳມະຊາດ ໃນທ່າມກາງພວກລູກຊາຍຂອງຢາໂຄບ ແລະ ວ່າຊີໂລ (ພຣະເຢຊູຄຣິດ) ຈະເປັນລູກຫລານຂອງລາວ (ປຖກ 49:10).

*ເຜົ່າຂອງຢູດາ:* ເຜົ່າຂອງຢູດາໄດ້ເປັນຜູ້ນຳຫລັງຈາກທີ່ໄດ້ຕັ້ງຖິ່ນຖານຢູ່ໃນການາອານ. ຄູ່ແຂ່ງຂອງເຜົ່ານີ້ແມ່ນເຜົ່າ ເອຟະຣາອິມ. ໂມເຊໄດ້ອວຍພອນເຜົ່າຂອງຢູດາ (ພບຍ 33:7). ຫລັງຈາກການປົກຄອງຂອງໂຊໂລໂມນ, ເຜົ່າຂອງຢູດາໄດ້ກາຍເປັນອານາຈັກຂອງຢູດາ.

*ອານາຈັກຂອງຢູດາ:* ໃນການປົກຄອງຂອງເຣໂຮໂບອາມ ອານາເຂດຂອງໂຊໂລໂມນໄດ້ຖືກແຍກອອກເປັນສອງອານາຈັກ, ສ່ວນໃຫຍ່ເປັນເພາະຄວາມອິດສາລະຫວ່າງເຜົ່າຂອງເອຟະຣາອິມ ແລະ ຢູດາ. ອານາຈັກພາກໃຕ້, ຫລື ອານາຈັກຢູດາ, ລວມທັງເຜົ່າຂອງຢູດາ ແລະ ພາກສ່ວນໃຫຍ່ຂອງເບັນຢາມິນ. ເຢຣູຊາເລັມໄດ້ເປັນຕົວເມືອງໃຫຍ່ຂອງມັນ. ສ່ວນຫລາຍຜູ້ຄົນກໍຊື່ສັດໃນການນະມັດສະການພຣະເຢໂຮວາ ຫລາຍກວ່າອານາຈັກພາກເໜືອ. ຢູດາບໍ່ໄດ້ຖືກໂຈມຕີຈາກອານາຈັກທາງພາກເໜືອ ແລະ ທາງພາກຕາເວັນອອກ, ແລະອຳນາດສູງສຸດຢູ່ໃນຄອບຄົວຂອງດາວິດ ຈົນກວ່າຖືກຊາວບາບີໂລນຈັບໄປເປັນຊະເລີຍ. ອານາຈັກຂອງຢູດາໄດ້ພະຍາຍາມຄົງຢູ່ຈົນເຖິງ 135 ປີ ຫລັງຈາກອານາຈັກແຫ່ງອິດສະຣາເອນທີ່ໂດ່ງດັງ ແລະ ມີອຳນາດກວ່າໄດ້ຕົກໄປ.

*ກິ່ງງ່າຂອງຢູດາ:* ນີ້ໝາຍເຖິງພຣະຄຣິສຕະທຳຄຳພີວ່າເປັນບັນທຶກຂອງເຊື້ອສາຍຂອງຢູດາ (ອຊກ 37:15–19). ໃນຍຸກສຸດທ້າຍ, ເມື່ອກິ່ງງ່າຕ່າງໆຂອງເຊື້ອສາຍອິດສະຣາເອນມາເຕົ້າໂຮມກັນ, ບັນທຶກທີ່ສັກສິດຂອງເຂົາເຈົ້າກໍຈະຖືກເຕົ້າໂຮມເຂົ້າກັນຄືກັນ. ບັນທຶກທີ່ເປັນພຣະຄຳພີເຫລົ່ານີ້ສົ່ງເສີມກັນແລະກັນ ແລະ ປະກອບເຂົ້າກັນເປັນປະຈັກພະຍານວ່າພຣະເຢຊູຄືພຣະຄຣິດ, ພຣະເຈົ້າຂອງອິດສະຣາເອນ ແລະ ພຣະເຈົ້າຂອງແຜ່ນດິນໂລກ (ປຈສ, ປຖກ 50:24–36 [ພາກທ້ອຍທ້າຍ]; 2 ນຟ 3; 29).

**ຢູດາ ອິສະກາຣິອົດ**

ຄົນໜຶ່ງ ໃນ ຈຳນວນອັກຄະສາວົກສິບສອງຄົນຂອງພຣະເຢຊູ ໃນພຣະຄຳພີໃໝ່ (ມທ 10:4; ມາຣະໂກ 14:10; ໂຢຮັນ 6:71;

12:4). ນາມສະກຸນຂອງລາວໝາຍເຖິງ "ໄທເກລີໂອດ." ລາວມາຈາກເຜົ່າຂອງຢູດາ ແລະ ເປັນອັກຄະສາວົກຄົນດຽວເທົ່ານັ້ນທີ່ບໍ່ໄດ້ເປັນໄທຄາລີເລ. ຢູດາໄດ້ທໍລະຍົດຕໍ່ພຣະຜູ້ເປັນເຈົ້າ.

ໄດ້ຮັບເງິນສາມສິບຫລຽນສຳລັບການມອບພຣະຄຣິດໃຫ້ຫົວໜ້າປະໂລຫິດ, **ມທ** 26:14–16 (ຊກຢ 11:12–13). ໄດ້ທໍລະຍົດຕໍ່ພຣະຜູ້ເປັນເຈົ້າດ້ວຍການຈູບ, **ມທ** 26:47–50 (ມຣກ 14:43–45; ລກ 22:47–48; ຢຮ 18:2–5). ໄດ້ຜູກຄໍຕາຍ, **ມທ** 27:5. ຊາຕານໄດ້ເຂົ້າສິງຢູດາ, **ລກ** 22:3 (ຢຮ 13:2, 26–30). ດາວິດໄດ້ກ່າວເຖິງການທໍລະຍົດຂອງຢູດາຕໍ່ພຣະຄຣິດ, **ກຈກ** 1:16 (ພສສ 41:9).

**ເຢຊີ.** *ເບິ່ງ* ດາວິດ *ນຳອີກ*

ໃນພຣະຄຳພີເດີມ, ບິດາຂອງດາວິດ ແລະ ບັນພະບຸລຸດຂອງພຣະຄຣິດ ແລະ ຂອງກະສັດທັງໝົດຢູດາ.

ລູກຊາຍຂອງນາງຣຸດ, ໂອເບັດ, ແມ່ນບິດາຂອງເຢຊີ, **ນຣ** 4:17, 22. ບັນພະບຸລຸດຂອງເຢຊີສາມາດນັບຄືນໄປຫາຢູດາ, **1 ຂຄ** 2:5–12 (ມທ 1:5–6).

**ເຢເຊເບນ.** *ເບິ່ງ* ອາຮາບ *ນຳອີກ*

ຜູ້ຍິງທີ່ຊົ່ວຮ້າຍໃນພຣະຄຳພີເດີມຈາກແຜ່ນດິນໂປນີເຊຍ. ນາງເປັນເມຍຂອງອາຮາບ (1 ກສ 16:30–31), ກະສັດຂອງອິດສະຣາເອນ ຜູ້ໄດ້ປົກຄອງໃນລະຫວ່າງທີ່ເອລີຢາເປັນສາດສະດາ.

ການແຕ່ງງານຂອງເຢເຊເບນກັບອາຮາບ, ຍິ່ງໄປກວ່າເຫດການອື່ນໆທີ່ໄດ້ເກີດຂຶ້ນຜ່ານມາ, ໄດ້ນຳຄວາມຫລົ້ມຈົມມາສູ່ອານາຈັກພາກເໜືອຂອງອິດສະຣາເອນ; ເຢເຊເບນໄດ້ແນະນຳການນະມັດສະການຮູບບູຊາທີ່ຊົ່ວຮ້າຍທີ່ສຸດແກ່ຊາວອິດສະຣາເອນ ຈາກແຜ່ນດິນຂອງນາງ ແທນການນະມັດສະການພຣະເຢໂຮວາ (1 ກສ 18:13, 19).

ເຢເຊເບນໄດ້ຂ້າສາດສະດາຂອງພຣະເຈົ້າຫລາຍຄົນ, **1 ກສ** 18:4. ເຢເຊເບນໄດ້ພະຍາຍາມຂ້າເອລີຢາ, **1 ກສ** 19:1–3. ຄວາມຊົ່ວຮ້າຍຂອງເຢເຊເບນໄດ້ສິ້ນສຸດລົງດ້ວຍການຕາຍທີ່ໂຫດຮ້າຍທາລຸນ, **2 ກສ** 9:30–37.

**ເຢທະໂຣ.** *ເບິ່ງ* ໂມເຊ *ນຳອີກ*

ເຈົ້າຊາຍ ແລະ ປະໂລຫິດຂອງມີດີອານໃນພຣະຄຳພີເດີມ ຜູ້ໄດ້ມອບເຮືອນຫລັງໜຶ່ງໃຫ້ໂມເຊຫລັງຈາກທີ່ໄດ້ໜີຈາກເອຢິບ. ລາວຍັງຖືກເອີ້ນວ່າ ເລອູເອນ (ອພຍ 2:18). ຕໍ່ມາໂມເຊໄດ້ແຕ່ງງານກັບລູກສາວຂອງເຢທະໂຣ ຊື່ ສິບໂປລາ (ອພຍ 3:1; 4:18; 18:1–12). ເຢທະໂຣ ໄດ້ສອນໂມເຊ ໃຫ້ມອບໝາຍ (ອພຍ 18:13–27). ໂມເຊໄດ້ຮັບຖານະປະໂລຫິດ ແຫ່ງເມນຄີເສເດັກ ຈາກ ເຢທະໂຣ (ຄພ 84:6–7).

**ເຢລຸບບາອານ.** *ເບິ່ງ* ກີເດໂອນ (ພຣະຄຳພີເດີມ) *ນຳອີກ*

ຊື່ທີ່ຕັ້ງໃຫ້ກີເດໂອນໃນພຣະຄຳພີເດີມ ຫລັງຈາກທີ່ເພິ່ນໄດ້ທຳລາຍແທ່ນບູຊາຂອງພຣະບາອານ (ຜປ 6:32; 7:1; 9; 1 ຊມອ 12:11).

**ເຢຣິໂກ**

ເມືອງທີ່ອ້ອມຮອບດ້ວຍກຳແພງ ໃນທົ່ງພຽງຈໍແດນ 800 ຟີດ (245 ແມັດ) ໃຕ້ຄວາມສູງຂອງໜ້າທະເລ. ເຢຣິໂກຕັ້ງຢູ່ໃກ້ບ່ອນທີ່ຊາວອິດສະຣາເອນຂ້າມແມ່ນ້ຳ ເຂົ້າໄປຫາແຜ່ນດິນແຫ່ງຄຳສັນຍາເທື່ອທຳອິດ (ຢຊ 2:1–3; 3:16; 6).

ຊາວ ອິດສະຣາເອນໄດ້ມີສົງຄາມຢູ່ທີ່ເຢຣິໂກ, **ຢຊ** 6:1–20. ໂຢຊວຍໄດ້ສາບແຊ່ງເມືອງເຢຣິໂກ, **ຢຊ** 6:26 (1 ກສ 16:34). ເມືອງເຢຣິໂກໄດ້ຢູ່ໃນຂົງເຂດທີ່ມອບໝາຍໃຫ້ເບັນຢາມິນ, **ຢຊ** 18:11–12, 21.

ພຣະຜູ້ເປັນເຈົ້າໄດ້ໄປຢ້ຽມຢາມເມືອງເຢຣິໂກ ຕອນພຣະອົງເດີນທາງໄປເຢຣູຊາເລັມເປັນເທື່ອສຸດທ້າຍ, **ມຣກ** 10:46 (ລກ 18:35; 19:1).

**ເຢຣູຊາເລັມ**

ເມືອງໜຶ່ງທີ່ຕັ້ງຢູ່ໃນອິດສະຣາເອນທຸກວັນ

ນີ້. ມັນ ເປັນ ເມືອງ ທີ່ ສຳ ຄັນ ຫລາຍ ທີ່ ສຸດ ໃນ ປະຫວັດສາດຂອງພຣະຄຳພີ. ຈຸດ ທີ່ສັກ ສິດ ສຳລັບ ຊາວຄຣິດ ສະຕຽນ, ຊາວຢິວ, ແລະ ມຸດສະລິມ ແມ່ນຢູ່ໃນ ເມືອງນີ້ ແລະ ໄດ້ຖືກ ຢ້ຽມຢາມເປັນປະຈຳໂດຍຜູ້ເຊື່ອທີ່ຊື່ສັດ. ສ່ວນ ຫລາຍມັນຖືກກ່າວ ເຖິງວ່າເປັນນະຄອນສັກ ສິດ.

ຄັ້ງໜຶ່ງ ເຄີຍ ເປັນ ທີ່ ຮູ້ຈັກ ກັນ ວ່າ ຊາເລັມ (ປຖກ 14:18; ພສສ 76:2), ເຢຣູຊາເລັມເປັນ ເມືອງຂອງເຢບຸດ ຈົນກວ່າດາວິດໄດ້ຍຶດຄອງ (ຢຊ 10:1; 15:8; 2 ຊມອ 5:6–7), ແລະ ໄດ້ຕັ້ງ ມັນເປັນເມືອງຫລວງ. ຈົນກວ່າເຖິງເວລານັ້ນ ສ່ວນຫລາຍແລ້ວມັນຖືກໃຊ້ເປັນເມືອງຍາມຢູ່ ເທິງຄ້ອຍພູ, ປະມານ 2600 ຟີດ (800 ແມັດ) ສູງກວ່າໜ້ານ້ຳທະເລ. ມັນຖືກອ້ອມຮອບໄປ ດ້ວຍຫ່ອມພູເລິກທຸກດ້ານ ຍົກເວັ້ນແຕ່ທາງ ທິດເໜືອເທົ່ານັ້ນ.

ໃນ ຊ່ວງ ໄລຍະ ການປົກຄອງຂອງກະສັດ ດາວິດໃນເຢຣູຊາເລັມ, ເພິ່ນໄດ້ອາໄສຢູ່ວັງທີ່ ເຮັດດ້ວຍໄມ້. ເຖິງຢ່າງໃດກໍຕາມ, ລະຫວ່າງ ໄລຍະການປົກຄອງຂອງໂຊໂລໂມນ, ປະຊາ ຊົນໄດ້ເຮັດຫລາຍສິ່ງຫລາຍຢ່າງ ເພື່ອດັດ ແປງໃຫ້ເມືອງສວຍງາມຂຶ້ນ, ລວມທັງວັງຂອງ ກະສັດ ແລະ ພຣະວິຫານ.

ຫລັງຈາກອານາຈັກຂອງອິດສະຣາເອນ ແລະ ຢູດາ ໄດ້ແຍກອອກຈາກກັນ, ເມືອງ ເຢຣູຊາເລັມຍັງເປັນເມືອງຫລວງຂອງຢູດາ ຢູ່ຕໍ່ໄປ. ມັນມັກຖືກສັດຕູເຂົ້າໂຈມຕີເລື້ອຍໆ (1 ກສ 14:25; 2 ກສ 14:13; 16:5; 18–19; 24:10; 25). ພາຍໃຕ້ການປົກຄອງຂອງເຮເຊ ກີຢາ, ເຢຣູຊາເລັມໄດ້ກາຍເປັນສູນກາງນະມັດ ສະການທາງສາດສະໜາ, ແຕ່ພາກສ່ວນໜຶ່ງ ໄດ້ຖືກທຳລາຍໃນ 320 ປີ ກ່ອນ ຄ.ສ., 168 ປີ ກ່ອນ ຄ.ສ., ແລະ 65 ປີ ກ່ອນ ຄ.ສ. ເຮໂຣດໄດ້ ສ້ອມແປງກຳແພງເມືອງ ແລະ ພຣະວິຫານ, ແຕ່ໃນ ຄ.ສ. 70 ຊາວໂຣມໄດ້ທຳລາຍມັນຈົນ ໝົດສິ້ນ.

ເມນຄີ ເສເດັກ ເປັນ ກະສັດ ຂອງ ຊາເລັມ, **ປຖກ** 14:18 (ຮຣ 7:1–2). ເອຊາຢາໄດ້ຮຽກ ຮ້ອງໃຫ້ກຸງເຢຣູຊາເລັມເຂັ້ມແຂງຂຶ້ນ, **ອຊຢ** 52:1. ພຣະຜູ້ເປັນເຈົ້າຈະສັ່ງສອນຈາກເຢຣູ ຊາເລັມ, **ມກ** 4:2.

ພຣະຄຣິດໄດ້ກັນແສງກ່ຽວກັບໂຊກຊະຕາ ຂອງ ເຢຣູ ຊາເລັມ, **ມທ** 23:37–39 (ລກ 13:34). ເຢຣູຊາເລັມເປັນນະຄອນຂອງພຣະ ເຈົ້າຜູ້ຊົງພຣະຊົນຢູ່, **ຮຣ** 12:22.

ເຢຣູຊາເລັມຕ້ອງຖືກທຳລາຍຖ້າຫາກຜູ້ຄົນ ບໍ່ກັບໃຈ, **1 ນຟ** 1:4, 13, 18 (2 ນຟ 1:4; ຮລມ 8:20). ເຢຣູຊາເລັມຈະມີຜູ້ຄົນອາໄສຢູ່ອີກ ຫລັງຈາກມັນຖືກທຳລາຍ, **3 ນຟ** 20:46. ເຢຣູ ຊາເລັມຈະຖືກສ້າງຂຶ້ນຄືນອີກ, **ອທ** 13:5.

ພຣະເຢຊູໄດ້ເຕືອນໄພ່ພົນຍຸກສຸດທ້າຍ ດັ່ງ ທີ່ພຣະອົງໄດ້ເຕືອນຜູ້ຄົນຂອງເຢຣູຊາເລັມ, **ຄພ** 5:20. ຜູ້ຄົນຂອງຢູດາໄດ້ຫລົບໜີໄປຍັງ ເຢຣູຊາເລັມ, **ຄພ** 133:13. ພຣະຜູ້ເປັນເຈົ້າຈະ ກ່າວຈາກເຢຣູຊາເລັມ, **ຄພ** 133:21.

**ເຢຣູຊາເລັມໃໝ່.** *ເບິ່ງ* ຊີໂອນ *ນຳອີກ*

ສະຖານທີ່ ບ່ອນທີ່ໄພ່ພົນຂອງພຣະເຈົ້າຈະ ເຕົ້າໂຮມ ແລະ ພຣະຄຣິດຈະປົກຄອງດ້ວຍ ພຣະອົງເອງລະຫວ່າງພັນປີ. ຊີໂອນ (ເຢຣູ ຊາເລັມໃໝ່) ຈະຖືກສ້າງຂຶ້ນໃນທະວີບອາເມຣິ ກາ, ແລະ ແຜ່ນດິນໂລກ ຈະຖືກເຮັດໃໝ່ ແລະ ໄດ້ຮັບລັດສະໝີພາບແຫ່ງສຸຂະເສີມຂອງມັນ (ຫຼຊ 1:10). ມັນຍັງໝາຍເຖິງນະຄອນສັກສິດ ນຳອີກ ທີ່ຈະລົງມາຈາກສະຫວັນໃນຕົ້ນໜຶ່ງ ພັນປີ.

ຄຳ ສັ່ງ ສອນ ຈະ ອອກ ມາ ຈາກ ຊີໂອນ, **ມກ** 4:2.

ຊື່ເມືອງພຣະເຈົ້າຂອງເຮົາແມ່ນເຢຣູຊາເລັມ ໃໝ່, **ພນມ** 3:12. ໂຢຮັນໄດ້ເຫັນນະຄອນສັກ ສິດ, ເຢຣູຊາເລັມໃໝ່, **ພນມ** 21:1–5.

ເຮົາຈະສະຖາປະນາຜູ້ຄົນພວກນີ້ຂຶ້ນໃນ ແຜ່ນດິນນີ້, ແລະ ມັນຈະເປັນເຢຣູຊາເລັມໃໝ່, **3 ນຟ** 20:22. ເຢຣູຊາເລັມໃໝ່ຈະຖືກສ້າງຂຶ້ນ ໃນອາເມຣິກາ, **ອທ** 13:3–6, 10.

ເມືອງເຢຣູຊາເລັມໃໝ່ຈະຖືກຈັດຕຽມ, **ຄພ** 42:9, 35, 62–69. ໄພ່ພົນຂອງພຣະເຈົ້າຈະຖືກ ເຕົ້າໂຮມ ແລະ ສ້າງເຢຣູຊາເລັມໃໝ່ຂຶ້ນ, **ຄພ** 45:63–75. ເຢຣູຊາເລັມໃໝ່ຈະຖືກສ້າງຂຶ້ນໃນ

ລັດ ມີ ເຊີຣີ, **ຄພ** 84:1–5 (ຄພ 57:1–3). ພຣະເມສາ ນ້ອຍ ຈະ ຕັ້ງຢູ່ ເທິງພູຊີໂອນ ແລະ ເທິງນະຄອນສັກສິດ, ເຢຣູຊາເລັມໃໝ່, **ຄພ** 133:56.

ສະຖານທີ່ນະມັດສະການ ຂອງເຮົາຈະຢູ່ທີ່ນັ້ນ, ແລະ ມັນຈະ ຖືກ ເອີ້ນວ່າ ຊີໂອນ, ເຢຣູຊາເລັມໃໝ່, **ມຊ** 7:62.

**ເຢເຣມີຢາ.** *ເບິ່ງ* ເພງຄໍ່າຄວນ, ພຣະທຳ *ນຳອີກ*

ສາດສະດາຂອງພຣະຄຳພີເດີມ ຜູ້ໄດ້ເກີດໃນຄອບຄົວປະໂລຫິດ ແລະ ໄດ້ທຳນາຍໃນຢູດາ ຈາກ 626 ເຖິງ 586 ປີ ກ່ອນ ຄ.ສ. ເພິ່ນມີຊີວິດຢູ່ໃກ້ສະໄໝຂອງສາດສະດາທີ່ຍິ່ງໃຫຍ່ເຊັ່ນ: ລີໄຮ, ເອເຊກຽນ, ໂຮເຊອາ, ແລະ ດານີເອນ.

ເຢເຣມີຢາໄດ້ຖືກແຕ່ງຕັ້ງໃຫ້ເປັນສາດສະດາຕອນມີຊີວິດກ່ອນມະຕະ (ຢມຢ 1:4–5). ໃນໄລຍະປະມານສີ່ສິບປີທີ່ເປັນສາດສະດາ ເພິ່ນໄດ້ສອນຕ້ານຮູບບູຊາ ແລະ ຄວາມອະທຳໃນບັນດາຊາວຢິວ (ຢມຢ 3:1–5; 7:8–10). ເພິ່ນໄດ້ປະເຊີນກັບສິ່ງກົງກັນຂ້າມ ແລະ ການດູຖູກສະເໝີ (ຢມຢ 20:2; 36:18–19; 38:4). ຫລັງຈາກຄວາມລົ້ມເຫລວຂອງເຢຣູຊາເລັມ, ຊາວຢິວຜູ້ໄດ້ລັກໜີໄປຫາປະເທດເອຢິບ ໄດ້ພາເຢເຣມີຢາໄປດ້ວຍ (ຢມຢ 43:5–6), ຕາມທີ່ບອກເລົ່າກັນມາ ເປັນບ່ອນທີ່ເພິ່ນໄດ້ຖືກແກວ່ງກ້ອນຫີນໃສ່ຈົນເຖິງແກ່ຄວາມຕາຍ.

*ພຣະທຳເຢເຣມີຢາ:* ບົດທີ 1–6 ບັນຈຸຄຳທຳນາຍທີ່ມອບໃຫ້ໃນໄລຍະການປົກຄອງຂອງໂຈໄຊຢາ. ບົດທີ 7–20 ເປັນຄຳທຳນາຍໃນສະໄໝຂອງເຢໂຮຍອາກິມ. ບົດທີ 21–38 ກ່ຽວກັບການປົກຄອງຂອງເຊເດກີຢາ. ບົດທີ 39–44 ບັນຈຸຄຳທຳນາຍ ແລະ ບັນຍາຍກ່ຽວກັບເຫດການທີ່ເກີດຂຶ້ນໃນປະຫວັດສາດ ຫລັງຈາກຄວາມລົ້ມເຫລວຂອງເຢຣູຊາເລັມ. ບົດທີ 45 ບັນຈຸຄຳສັນຍາຕໍ່ບາຣຸກ, ຜູ້ຂຽນຂອງເພິ່ນ, ວ່າຊີວິດຂອງບາຣຸກຈະຖືກຮັກສາໄວ້. ສຸດທ້າຍ, ບົດທີ 46–51 ເປັນຄຳທຳນາຍຕໍ່ຕ້ານປະຊາຊາດຕ່າງໆ. ບົດທີ 52 ເປັນການສະຫລຸບປະຫວັດສາດ. ຄຳທຳນາຍບາງຢ່າງຂອງເຢເຣມີຢາ ມີບັນຈຸຢູ່ໃນແຜ່ນຈາລຶກທອງເຫລືອງຂອງລາບານ ຊຶ່ງນີໄຟໄດ້ຮັກສາໄວ້ (1 ນຟ 5:10–13). ເຢເຣມີຢາກໍຖືກກ່າວເຖິງສອງເທື່ອອື່ນອີກໃນພຣະຄຳພີມໍມອນ (1 ນຟ 7:14; ຮລມ 8:20).

ພຣະທຳເຢເຣມີຢາຍັງຮ່ວມດ້ວຍການຮັບຮູ້ການມີຊີວິດຢູ່ກ່ອນຊີວິດມະຕະ ແລະ ເຖິງການແຕ່ງຕັ້ງກ່ອນເກີດຂອງເຢເຣມີຢາ (ຢມຢ 1:4–5); ຄຳທຳນາຍກ່ຽວກັບການກັບມາຂອງຊາວອິດສະຣາເອນຈາກການກະຈັດກະຈາຍຂອງພວກເຂົາ, ການເຕົ້າໂຮມເມືອງໜຶ່ງ ແລະ ສອງຄອບຄົວສູ່ຊີໂອນ, ຊຶ່ງເປັນແຜ່ນດິນທີ່ສວຍງາມ ບ່ອນທີ່ຊາວອິດສະຣາເອນ ແລະ ຊາວຢູດາ ສາມາດອາໄສຢູ່ຢ່າງປອດໄພ ແລະ ສະຫງົບສຸກ (ຢມຢ 3:12–19); ແລະ ຄຳທຳນາຍຂອງພຣະຜູ້ເປັນເຈົ້າກ່ຽວກັບການເຕົ້າໂຮມຊາວອິດສະຣາເອນຈາກແຜ່ນດິນທາງທິດເໜືອ ໂດຍການສົ່ງ "ຊາວປະມົງ" ແລະ "ນັກລ່າສັດ" ໄປຊອກຫາພວກເຂົາ (ຢມຢ 16:14–21). ເຫດການນີ້ຊຶ່ງຈະເກີດຂຶ້ນໃນຍຸກສຸດທ້າຍ ຈະເປັນເຫດການທີ່ໃຫຍ່ໂຕ, ໃຫຍ່ກວ່າເຫດການທີ່ໂມເຊໄດ້ພາຊາວອິດສະຣາເອນອອກມາຈາກປະເທດເອຢິບ (ຢມຢ 16:13–15; 23:8).

**ເຢໂຣໂບອາມ**

ໃນພຣະຄຳພີເດີມ, ເຢໂຣໂບອາມໄດ້ເປັນກະສັດອົງທຳອິດຂອງອິດສະຣາເອນພາກເໜືອ. ເພິ່ນເປັນຄົນໜຶ່ງຂອງເຜົ່າເອຟະຣາອິມ. ເຢໂຣໂບອາມທີ່ຊົ່ວຮ້າຍໄດ້ນຳພາການປະຕິວັດໄປຕໍ່ສູ້ກັບເຊື້ອສາຍຢູດາ ແລະ ຕະກຸນຂອງດາວິດ.

ເຢໂຣໂບອາມໄດ້ສ້າງຕັ້ງຮູບບູຊາໃຫ້ຜູ້ຄົນນະມັດສະການໃນເມືອງດານ ແລະ ເບັດເອນ, **1 ກສ** 12:28–29. ອາຮີຢາໄດ້ຕິຕຽນເຢໂຣໂບອາມ, **1 ກະສັດ** 14:6–16. ເຢໂຣໂບອາມຖືກຈື່ຈຳວ່າເປັນຜູ້ທີ່ນຳບາບອັນຊົ່ວຮ້າຍມາສູ່ຊາວອິດສະຣາເອນ, **1 ກສ** 15:34 (1 ກສ 12:30).

**ເຢໂຮຊາຟັດ**

ໃນພຣະຄຳພີເດີມ, ກະສັດທີ່ຊື່ສັດຄົນໜຶ່ງຂອງຢູດາ (1 ກສ 15:24; 22).

**ເຢໂຮວາ.** *ເບິ່ງ* ພຣະເຢຊູຄຣິດ; ເຮົາເປັນ *ນຳອີກ*

ພຣະນາມແຫ່ງພັນທະສັນຍາ ຫລື ທີ່ຖືກຕ້ອງຂອງພຣະເຈົ້າຂອງອິດສະຣາເອນ. ມັນຊີ້ບອກ "ເຮົາເປັນຜູ້ເຮົາເປັນ" (ອພຍ 3:14; ຢຮ 8:58). ເຢໂຮວາເປັນຊື່ກ່ອນມະຕະຂອງພຣະເຢຊູຄຣິດ ແລະ ໄດ້ມາສູ່ໂລກໃນຖານະທີ່ເປັນບຸດຂອງນາງມາຣີ (ມຊຢ 3:8; 15:1; 3 ນຟ 15:1–5). ຕາມປົກກະຕິແລ້ວ, ເມື່ອຄຳວ່າພຣະຜູ້ເປັນເຈົ້າປະກົດຢູ່ໃນພຣະຄຳພີເດີມ, ມັນໝາຍເຖິງ "ພຣະເຢໂຮວາ."

*ພຣະເຢໂຮວາຄື ພຣະຄຣິດ:* ພຣະເຢໂຮວາໄດ້ເປັນທີ່ຮູ້ຈັກຕໍ່ສາດສະດາໃນສະໄໝບູຮານ (ອພຍ 6:3; ອຣຮ 1:16). ອັກຄະສາວົກໂປໂລໄດ້ສອນວ່າ ພຣະຄຣິດຄືພຣະເຢໂຮວາຂອງພຣະຄຳພີເດີມ (ອພຍ 17:6; 1 ກຣທ 10:1–4). ນ້ອງຊາຍຂອງຢາເຣັດໃນພຣະຄຳພີມໍມອນໄດ້ເຫັນພຣະຄຣິດກ່ອນມະຕະ ແລະ ໄດ້ນະມັດສະການພຣະອົງ (ອທ 3:13–15). ໂມໂຣໄນຍັງໄດ້ເອີ້ນພຣະຄຣິດວ່າ "ພຣະເຢໂຮວາ" ນຳອີກ (ມຣນ 10:34). ທີ່ພຣະວິຫານເຄີດແລນ, ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ ໄດ້ເຫັນພຣະເຢໂຮວາທີ່ຟື້ນຄືນພຣະຊົນແລ້ວ (ຄພ 110:3–4).

**ໂຢຊີຢາ**

ກະສັດທີ່ຊອບທຳຂອງຢູດາ ຈາກ 641–610 ປີ ກ່ອນ ຄ.ສ. (2 ກສ 22–24; 2 ຂຄ 34–35). ໃນລະຫວ່າງການປົກຄອງຂອງເພິ່ນ, ໜັງສືກົດໄດ້ຖືກພົບເຫັນຢູ່ໃນບ້ານຂອງພຣະຜູ້ເປັນເຈົ້າ (2 ກສ 22:8–13).

**ໂຢເຊັບ, ກິ່ງງ່າຂອງ.** *ເບິ່ງ* ພຣະຄຳພີມໍມອນ; ເອຟະຣາອິມ—ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ

**ໂຢເຊັບ, ສາມີຂອງນາງມາຣີ.** *ເບິ່ງ* ພຣະເຢຊູຄຣິດ; ມາຣີ, ມານດາຂອງພຣະເຢຊູ *ນຳອີກ*

ສາມີຂອງນາງມາຣີ, ມານດາຂອງພຣະເຢຊູ. ໂຢເຊັບເປັນທາຍາດຂອງດາວິດ (ມທ 1:1–16; ລກ 3:23–38) ແລະ ໄດ້ອາໄສຢູ່ໃນນາຊາເຣັດ. ລາວໄດ້ເປັນຄູ່ໝັ້ນຂອງນາງມາຣີ. ບໍ່ດົນກ່ອນເຂົາເຈົ້າຈະແຕ່ງງານກັນ, ທູດຄັບຣີເອນໄດ້ມາຢ້ຽມຢາມນາງ, ຜູ້ໄດ້ປະກາດວ່ານາງມາຣີໄດ້ຖືກເລືອກໃຫ້ເປັນມານດາຂອງພຣະຜູ້ຊ່ວຍໃຫ້ລອດ (ລກ 1:26–35). ໂຢເຊັບກໍໄດ້ຮັບການເປີດເຜີຍກ່ຽວກັບການກຳເນີດແຫ່ງສະຫວັນນີ້ຄືກັນ (ມທ 1:20–25).

ນາງມາຣີເປັນບິດາມານດາຄົນດຽວເທົ່ານັ້ນຂອງພຣະເຢຊູຢູ່ໃນໂລກນີ້ ເພາະວ່າພຣະເຈົ້າເປັນພຣະບິດາຂອງພຣະເຢຊູ. ແຕ່ຊາວຢິວຄິດວ່າໂຢເຊັບເປັນບິດາຂອງພຣະເຢຊູ, ແລະ ພຣະເຢຊູກໍໄດ້ນັບຖືລາວເປັນບິດາຂອງພຣະອົງ (ລກ 2:48, 51). ໂດຍທີ່ໄດ້ຖືກເຕືອນດ້ວຍຄວາມຝັນຈາກສະຫວັນ, ໂຢເຊັບ ຈຶ່ງໄດ້ຮັກສາຊີວິດຂອງກຸມມານນ້ອຍເຢຊູ ໂດຍການໜີໄປປະເທດເອຢິບ (ມທ 2:13–14). ຫລັງຈາກເຮໂຣດໄດ້ຕາຍໄປ, ທູດໄດ້ແນະນຳໂຢເຊັບໃຫ້ພາພຣະຄຣິດກັບຄືນໄປອິດສະຣາເອນ (ມທ 2:19–23).

**ໂຢເຊັບ, ລູກຊາຍຂອງຢາໂຄບ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍກົກຂອງຢາໂຄບກັບນາງລາເຊັນ (ປຖກ 30:22–24; 37:3).

ໂຢເຊັບໄດ້ຮັບເອົາສິດທິຂອງອ້າຍກົກຂອງລາວໃນອິດສະຣາເອນ ເພາະວ່າຣູເບັນ, ລູກຊາຍກົກຂອງຢາໂຄບກັບເມຍຄົນທຳອິດ, ໄດ້ສູນເສຍສິດທິພິເສດໄປໂດຍການລ່ວງລະເມີດ (1 ຂຄ 5:1–2). ເພາະລາວມີຄ່າຄວນພໍ, ໂຢເຊັບ, ໂດຍທີ່ເປັນລູກຊາຍກົກຂອງຢາໂຄບກັບເມຍຄົນທີສອງ, ລາວຈຶ່ງເປັນຄົນທີສອງສຳລັບພອນນີ້. ໂຢເຊັບຍັງໄດ້ຮັບພອນຈາກພໍ່ຂອງລາວນຳອີກ ບໍ່ດົນກ່ອນຢາໂຄບໄດ້ເສຍຊີວິດໄປ (ປຖກ 49:22–26).

ໂຢເຊັບໄດ້ເປັນຊາຍທີ່ມີຄຸນສົມບັດດີ, ເປັນຊາຍທີ່ "ຮອບຄອບ ແລະ ສະຫລາດ" (ປຖກ 41:39). ການປະຕິເສດຂອງລາວຕໍ່ເມຍຂອງໂປຕີຟາ ເປັນຕົວຢ່າງແຫ່ງສັດທາ, ພົມມະຈັນ, ແລະ ຄວາມຊື່ສັດໃນຕົວ (ປຖກ 39:7–12). ໃນ

ປະເທດເອຢິບ, ເມື່ອໂຢເຊັບໄດ້ເປີດເຜີຍຕົນເອງໃຫ້ພວກອ້າຍນ້ອງຂອງລາວຮູ້ວ່າ ລາວເປັນໃຜ, ລາວໄດ້ຂອບໃຈເຂົາເຈົ້າແທນທີ່ຈະກ່າວໂທດ ສຳລັບສິ່ງທີ່ເຂົາເຈົ້າໄດ້ເຮັດກັບລາວ. ລາວໄດ້ເຊື່ອວ່າ ການກະທຳຂອງເຂົາເຈົ້າໄດ້ຊ່ວຍເຫລືອລາວໃຫ້ບັນລຸພຣະປະສົງແຫ່ງສະຫວັນຂອງພຣະເຈົ້າ (ປຖກ 45:4–15).

ການເປີດເຜີຍຍຸກສຸດທ້າຍໄດ້ເປີດເຜີຍພາລະກິດອັນຍິ່ງໃຫຍ່ກວ່າຂອງຄອບຄົວຂອງໂຢເຊັບໃນຍຸກສຸດທ້າຍ (ປຈສ, ປຖກ 50:24–38 [ພາກທ້ອຍທ້າຍ]; 2 ນຟ 3:3–24; 3 ນຟ 20:25–27).

ຢາໂຄບຮັກໂຢເຊັບຫລາຍ ແລະ ໄດ້ຕັດເສື້ອລ່າມມີແຂນຜືນໜຶ່ງ ທີ່ມີຫລາຍສີໃຫ້ລາວ, **ປຖກ** 37:3. ເພາະຄວາມອິດສາ ພວກອ້າຍຂອງໂຢເຊັບຈຶ່ງເກີດມີຄວາມກຽດຊັງລາວຫລາຍຂຶ້ນ ແລະ ໄດ້ວາງແຜນທີ່ຈະຂ້າລາວ, ແຕ່ໄດ້ຂາຍລາວໃຫ້ພວກພໍ່ຄ້າແທນ, ຜູ້ກຳລັງເດີນທາງໄປປະເທດເອຢິບ, **ປຖກ** 37:5–36. ໃນປະເທດເອຢິບ, ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ໂຢເຊັບຈະເລີນຮຸ່ງເຮືອງ ແລະ ກາຍເປັນຜູ້ປົກຄອງຊັບສິນໃນເຮືອນຂອງໂປຕີຟາ, **ປຖກ** 39:1–4. ເມຍຂອງໂປຕີຟາໄດ້ເວົ້າຕົວະ, ບອກວ່າໂຢເຊັບໄດ້ພະຍາຍາມຍົ້ວຍວນນາງ; ໂຢເຊັບໄດ້ຖືກກ່າວຫາ ແລະ ໄດ້ຖືກຈັບເຂົ້າຄຸກ, **ປຖກ** 39:7–20. ໂຢເຊັບໄດ້ແກ້ຄວາມຝັນຂອງຫົວໜ້າພະນັກງານເຮັດເຫລົ້າອະງຸ່ນ ແລະ ຫົວໜ້າພະນັກງານເຮັດເຂົ້າຈີ່ຂອງຟາຣາໂອ, **ປຖກ** 40. ຟາລາໂອໄດ້ເກີດມັກຊອບໂຢເຊັບ ເພາະໂຢເຊັບໄດ້ແກ້ຄວາມຝັນອັນໜຶ່ງໃຫ້ຟາຣາໂອ; ເພິ່ນໄດ້ແຕ່ງຕັ້ງໂຢເຊັບໃຫ້ເປັນຜູ້ປົກຄອງຕະຫລອດທົ່ວເອຢິບ, **ປຖກ** 41:14–45. ເອຟະຣາອິມ ກັບ ມານາເຊ ໄດ້ເກີດມາ, **ປຖກ** 41:50–52. ໂຢເຊັບໄດ້ພົບເຫັນພໍ່ ແລະ ພວກອ້າຍນ້ອງຂອງລາວຄືນອີກ, **ປຖກ** 45–46. ໂຢເຊັບໄດ້ເສຍຊີວິດໄປຢູ່ໃນປະເທດເອຢິບ ຕອນມີອາຍຸໄດ້ 110 ປີ, **ປຖກ** 50:22–26.

**ໂຢເຊັບແຫ່ງອາຣິມາທາຍ**

ໂຢເຊັບແຫ່ງອາຣິມາທາຍເປັນສະມາຊິກຄົນໜຶ່ງຢູ່ໃນສານເຣດຣິນ, ເປັນສານຸສິດຂອງພຣະຄຣິດ, ແລະ ເປັນຊາວອິດສະຣາເອນທີ່ຮັ່ງມີ ແລະ ຊື່ສັດ ຜູ້ບໍ່ໄດ້ມີສ່ວນໃນການປະນາມພຣະຜູ້ເປັນເຈົ້າຂອງເຮົາ. ຫລັງຈາກການຄຶງ, ໂຢເຊັບໄດ້ສັ່ງໃຫ້ຜູ້ຄົນເອົາຜ້າລີນິນທີ່ຂາວສະອາດມາຫໍ່ພຣະສົບຂອງພຣະຜູ້ຊ່ວຍໃຫ້ລອດ ແລະ ເອົາໄປຝັງໄວ້ໃນອຸບມຸງຂອງໂຢເຊັບເອງ (ມທ 27:57–60; ມຣກ 15:43–46; ລກ 23:50–53; ຢຮ 19:38–42).

**ໂຢຊວຍ.** *ເບິ່ງ* ເຢຣິໂກ *ນຳອີກ*

ສາດສະດາ ແລະ ຜູ້ນຳໃນພຣະຄຳພີເດີມ, ແລະ ເປັນຜູ້ຮັບຕຳແໜ່ງແທນໂມເຊ. ເພິ່ນໄດ້ເກີດຢູ່ໃນປະເທດເອຢິບກ່ອນລູກຫລານຂອງອິດສະຣາເອນລັກໜີໄປ (ຈບຊ 14:26–31). ເພິ່ນພ້ອມດ້ວຍກາເຫລັບ ໄດ້ເປັນຜູ້ໜຶ່ງໃນພວກນັກສືບສິບສອງຄົນ ທີ່ຖືກສົ່ງໄປການາອານ. ເຂົາເຈົ້າສອງຄົນນີ້ເທົ່ານັ້ນທີ່ໄດ້ໃຫ້ການລາຍງານດີກ່ຽວກັບແຜ່ນດິນ (ຈບຊ 13:8, 16–33; 14:1–10). ເພິ່ນໄດ້ເສຍຊີວິດໄປຕອນມີອາຍຸໄດ້ 110 ປີ (ຢຊ 24:29). ໂຢຊວຍໄດ້ເປັນຕົວຢ່າງທີ່ດີຂອງການເປັນສາດສະດານັກຮົບທີ່ອຸທິດຕົນ.

*ພຣະທຳ ໂຢຊວຍ:* ໜັງສືເຫລັ້ມນີ້ຊື່ວ່າໂຢຊວຍ ເພາະວ່າ ເພິ່ນເປັນຜູ້ສຳຄັນໃນໜັງສືເຫລັ້ມນີ້ ແລະ ບໍ່ແມ່ນເພາະວ່າເພິ່ນເປັນຜູ້ຂຽນ. ບົດທີ 1–12 ບັນລະຍາຍການຍຶດເອົາການາອານ; ບົດທີ 13–24 ບອກເຖິງເຜົ່າຕ່າງໆຂອງອິດສະຣາເອນທີ່ໄດ້ແບ່ງແຍກແຜ່ນດິນ ແລະ ຄຳແນະນຳເທື່ອສຸດທ້າຍຂອງໂຢຊວຍ.

ສອງຂໍ້ທີ່ເດັ່ນຢູ່ໃນພຣະທຳໂຢຊວຍ ແມ່ນພຣະບັນຊາຂອງພຣະຜູ້ເປັນເຈົ້າ ໃຫ້ເພິ່ນຕັ້ງໃຈຕຶກຕອງອ່ານພຣະຄຳພີ (ຢຊ 1:8) ແລະ ຄຳຮຽກຮ້ອງຂອງໂຢຊວຍ ໃຫ້ຜູ້ຄົນຊື່ສັດຕໍ່ພຣະຜູ້ເປັນເຈົ້າ (ຢຊ 24:15).

**ໂຢນາ.** *ເບິ່ງ* ນີເນເວ *ນຳອີກ*

ສາດສະດາໃນພຣະຄຳພີເດີມ ຜູ້ຊຶ່ງພຣະຜູ້ເປັນເຈົ້າໄດ້ເອີ້ນໃຫ້ສັ່ງສອນເລື່ອງການກັບໃຈຢູ່ເມືອງນີເນເວ (ຢນ 1:1–2).

*ພຣະທຳ ໂຢນາ:* ໜັງສືໃນພຣະຄຳພີເດີມ

ທີ່ບອກເຖິງປະສົບການໃນຊີວິດຂອງໂຢນາ. ບາງທີໂຢນາບໍ່ໄດ້ຂຽນປຶ້ມດ້ວຍຕົນເອງ. ເນື້ອໃນສ່ວນ ໃຫຍ່ ຂອງພຣະທຳ ໂຢນາ ແມ່ນວ່າ ພຣະເຢໂຮວາປົກຄອງໃນທຸກບ່ອນ ແລະ ບໍ່ໄດ້ຈຳກັດຄວາມຮັກຂອງພຣະອົງກັບປະຊາຊາດ ໃດ ຫລື ບຸກຄົນໃດ.

ໃນ ບົດທີ 1, ພຣະຜູ້ເປັນເຈົ້າໄດ້ເອີ້ນໂຢນາ ໃຫ້ສັ່ງສອນຢູ່ເມືອງນີເນເວ. ແທນທີ່ຈະເຮັດຕາມດັ່ງທີ່ພຣະຜູ້ເປັນເຈົ້າໄດ້ບັນຊາ, ໂຢນາໄດ້ໜີຂຶ້ນເຮືອໄປ ແລະ ຖືກປາໃຫຍ່ກືນກິນ. ໃນ ບົດທີ 2, ໂຢນາໄດ້ອະທິຖານຫາພຣະຜູ້ເປັນເຈົ້າ, ແລະ ປາໄດ້ຄາຍໂຢນາອອກໄວ້ເທິງດິນບ່ອນແຫ້ງ. ບົດທີ 3 ບັນທຶກວ່າ ໂຢນາໄດ້ໄປເມືອງນີເນເວ ແລະ ໄດ້ທຳນາຍກ່ຽວກັບການຕົກຂອງມັນ. ເຖິງຢ່າງໃດກໍຕາມ, ຜູ້ຄົນໄດ້ກັບໃຈ. ໃນ ບົດທີ 4, ພຣະຜູ້ເປັນເຈົ້າໄດ້ຕິຕຽນໂຢນາທີ່ໄດ້ໃຈຮ້າຍໃຫ້ພຣະຜູ້ເປັນເຈົ້າວ່າພຣະອົງໄດ້ຊ່ວຍເຫລືອຜູ້ຄົນ.

ພຣະເຢຊູໄດ້ສອນວ່າ ການທີ່ໂຢນາໄດ້ຖືກປາກືນກິນ ໄດ້ເປັນສັນຍາລັກບອກເຫດການລ່ວງໜ້າກ່ຽວກັບການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຂອງພຣະເຢຊູນັ້ນເອງ (ມທ 12:39–40; 16:4; ລກ 11:29–30).

**ໂຢນາທານ.** *ເບິ່ງ* ໂຊນ, ກະສັດຂອງອິດສະຣາເອນ; ດາວິດ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງໂຊນ, ກະສັດຂອງອິດສະຣາເອນ. ໂຢນາທານເປັນເພື່ອນສະໜິດຂອງດາວິດ (1 ຊມອ 13–23; 31).

**ໂຢບ**

ໃນພຣະຄຳພີເດີມ, ຊາຍທີ່ຊອບທຳຄົນໜຶ່ງຜູ້ໄດ້ຮັບທຸກທໍລະມານຢ່າງແສນສາຫັດ ແຕ່ຍັງຊື່ສັດຕໍ່ຄວາມເຊື່ອຂອງເພິ່ນໃນພຣະເຈົ້າຢູ່. ເລື່ອງລາວຂອງເພິ່ນຖືກບອກໄວ້ຢູ່ໃນພຣະທຳໂຢບ.

*ພຣະທຳ ໂຢບ:* ເຖິງ ແມ່ນ ວ່າໜັງສືນີ້ແມ່ນກ່ຽວກັບຄວາມທຸກທໍລະມານຂອງໂຢບ, ແຕ່ມັນກໍບໍ່ໄດ້ຕອບຄຳຖາມທັງໝົດວ່າເປັນຫຍັງໂຢບ (ຫລື ຄົນອື່ນໆ) ທົນທຸກທໍລະມານກັບຄວາມເຈັບປວດ ແລະ ການສູນເສຍຄອບຄົວ ແລະ ຊັບສົມບັດຂອງເພິ່ນໄປ. ໜັງສືບອກໄວ້ວ່າ ການມີຄວາມທຸກທໍລະມານບໍ່ໄດ້ໝາຍຄວາມວ່າ ບຸກຄົນດັ່ງກ່າວໄດ້ເຮັດບາບ. ພຣະຜູ້ເປັນເຈົ້າອາດໃຊ້ຄວາມທຸກທໍລະມານເພື່ອເປັນປະສົບການ, ໃຫ້ມີລະບຽບວິໄນ, ແລະ ເພື່ອແນະນຳ ເຊັ່ນດຽວກັບການລົງໂທດ (ຄພ 122).

ໜັງສືເຫລັ້ມນີ້ແຍກອອກເປັນສີ່ພາກສ່ວນດ້ວຍກັນ. ບົດທີ 1–2 ເປັນຄຳນຳເຂົ້າສູ່ເລື່ອງ. ບົດທີ 3–31 ເລື່ອງລາວຕໍ່ເນື່ອງກ່ຽວກັບການສົນທະນາກັນລະຫວ່າງໂຢບ ແລະ ໝູ່ເພື່ອນສາມຄົນຂອງເພິ່ນ. ບົດທີ 32–37 ບັນຈຸຖ້ອຍຄຳຂອງເອລີຮູ, ເພື່ອນຄົນທີສີ່, ຜູ້ໄດ້ປະນາມໂຢບດ້ວຍເຫດຜົນຢ່າງອື່ນ ທີ່ນອກເໜືອໄປຈາກເຫດຜົນຂອງໝູ່ເພື່ອນສາມຄົນທຳອິດ. ບົດທີ 38–42 ລົງທ້າຍໜັງສືດ້ວຍການໃຫ້ຄວາມໝັ້ນໃຈຕໍ່ໂຢບວ່າ ເສັ້ນທາງໃນຊີວິດຂອງເພິ່ນນັ້ນດີມາຕັ້ງແຕ່ຕົ້ນ.

ພຣະທຳໂຢບສອນວ່າ ຖ້າຫາກຄົນໃດມີຄວາມຮູ້ທີ່ສົມບູນກ່ຽວກັບພຣະເຈົ້າ ແລະ ດຳລົງຊີວິດໃຫ້ເປັນທີ່ຍອມຮັບຕໍ່ພຣະເຈົ້າ, ຄົນນັ້ນຈະສາມາດອົດທົນກັບບັນຫາທີ່ມາເຖິງເຂົາໄດ້. ສັດທາທີ່ບໍ່ຫວັ່ນໄຫວຂອງໂຢບໄດ້ສະແດງໃຫ້ເຫັນດ້ວຍຖ້ອຍຄຳທີ່ເພິ່ນໄດ້ກ່າວອອກມາ ທີ່ວ່າ, "ເຖິງແມ່ນພຣະອົງຈະເອົາຊີວິດຂອງຂ້ອຍໄປ, ແຕ່ຂ້ອຍກໍຍັງໄວ້ວາງໃຈໃນພຣະອົງຢູ່" (ໂຢບ 13:15). ໂຢບຍັງຖືກກ່າວເຖິງອີກຢູ່ໃນ ເອເຊກຽນ 14:14; ຢາໂກໂບ 5:11; ຄຳສອນ ແລະ ພັນທະສັນຍາ 121:10.

**ໂຢເອນ**

ສາດສະດາໃນແຜ່ນດິນຂອງຢູດາໃນພຣະຄຳພີເດີມ. ບໍ່ຮູ້ວັນທີແນ່ນອນກ່ຽວກັບຊີວິດຂອງເພິ່ນ—ເພິ່ນອາດມີຊີວິດຢູ່ລະຫວ່າງການປົກຄອງຂອງໂຢອາດ, ກ່ອນ 850 ປີ ກ່ອນ ຄ.ສ., ແລະ ການກັບຄືນມາຂອງເຜົ່າຢູດາຈາກການເປັນຊະເລີຍໃນບາບີໂລນ.

*ໜັງສືຂອງໂຢເອນ:* ໜັງສືເຈາະຈົງເລື່ອງການທຳນາຍທີ່ໂຢເອນໄດ້ກ່າວຫລັງຈາກແຜ່ນດິນຂອງຢູດາໄດ້ຖືກທຳລາຍດ້ວຍຄວາມ

ແຫ້ງແລ້ງ ແລະ ດ້ວຍຕັກແຕນ (ຢອ 1:4–20). ໂຢເອນ ໄດ້ສັນຍາກັບຜູ້ຄົນວ່າ ຜ່ານການກັບໃຈ ພວກເຂົາຈະໄດ້ຮັບພອນຂອງພຣະເຈົ້າອີກ (ຢອ 2:12–14).

ບົດທີ 1 ໄດ້ເອີ້ນໃຫ້ເຕົ້າໂຮມກັນໃນບ້ານຂອງພຣະຜູ້ເປັນເຈົ້າ. ບົດທີ 2 ບອກເຖິງສົງຄາມ ແລະ ຄວາມຫວ່າງເປົ່າທີ່ຈະເກີດຂຶ້ນກ່ອນໄລຍະພັນປີ. ບົດທີ 3 ກ່າວເຖິງຍຸກສຸດທ້າຍ ແລະ ຢືນຢັນວ່າ ປະຊາຊາດທັງປວງຈະຕໍ່ສູ້ກັນ ແຕ່ໃນທີ່ສຸດພຣະຜູ້ເປັນເຈົ້າຈະສະຖິດຢູ່ໃນຊີໂອນ.

ເປໂຕໄດ້ອ້າງເຖິງຄຳທຳນາຍຂອງໂຢເອນກ່ຽວກັບພຣະວິນຍານທີ່ຖອກເທລົງມາໃນວັນເພັນເຕຄໍສະເຕ (ຢອ 2:28–32; ກຈກ 2:16–21). ທູດໂມໂຣໄນກໍໄດ້ກ່າວກ່ຽວກັບເລື່ອງນີ້ກັບໂຈເຊັບ ສະມິດ ຄືກັນ (ຈສ—ປ 1:41).

**ໂຢຮັນ, ລູກຊາຍຂອງເຊເບດາຍ.** *ເບິ່ງ* ຖານະປະໂລຫິດແຫ່ງເມນຄີເສເດັກ; ບຸກຄົນທີ່ຖືກປ່ຽນສະພາບແລ້ວ; ພຣະທຳ; ພຣະນິມິດຂອງໂຢຮັນ; ອັກຄະສາວົກ *ນຳອີກ*

ໜຶ່ງໃນຈຳນວນອັກຄະສາວົກສິບສອງຄົນໃນພຣະຄຳພີໃໝ່, ລູກຊາຍຂອງເຊເບດາຍ, ແລະ ເປັນນ້ອງຊາຍຂອງຢາໂກໂບ. ແຕ່ກ່ອນລາວເຄີຍເປັນນັກປະມຸງ (ມຣກ 1:17–20). ບາງທີລາວອາດເປັນສານຸສິດທີ່ບໍ່ບອກຊື່ ຊຶ່ງໂຢຮັນບັບຕິສະໂຕໄດ້ກ່າວເຖິງໃນ ໂຢຮັນ 1:40. ຕໍ່ມາລາວໄດ້ຖືກເອີ້ນໃຫ້ເປັນສານຸສິດຂອງພຣະເຢຊູຄຣິດ (ມທ 4:21–22; ລກ 5:1–11). ລາວໄດ້ຂຽນພຣະກິດຕິຄຸນຂອງໂຢຮັນ, ສານສາມສະບັບ, ແລະ ພຣະທຳພຣະນິມິດ. ລາວເປັນຄົນໜຶ່ງທີ່ໄດ້ຢູ່ນຳພຣະຜູ້ເປັນເຈົ້າຕອນໂຜດລູກສາວຂອງຢາອີໂຣໃຫ້ຄືນມີຊີວິດ (ມຣກ 5:35–42), ຕອນຢູ່ເທິງພູແຫ່ງການປ່ຽນສະພາບ (ມທ 17:1–9), ແລະ ໃນສວນເຄັດເຊມາເນ (ມທ 26:36–46). ໃນການຂຽນຂອງລາວເອງ, ລາວໄດ້ກ່າວເຖິງຕົນເອງວ່າເປັນສານຸສິດ ຜູ້ຊຶ່ງພຣະເຢຊູຮັກ (ຢຮ 13:23; 21:20) ແລະ ເປັນ "ສານຸສິດອີກຄົນໜຶ່ງ" (ຢຮ 20:2–8). ພຣະເຢຊູໄດ້ເອີ້ນລາວ ແລະ ອ້າຍຂອງລາວວ່າ ໂບອະເນເຄ, "ລູກຟ້າຮ້ອງ" (ມຣກ 3:17). ມີຂໍ້ອ້າງອີງກ່ຽວກັບລາວເລື້ອຍໆຢູ່ໃນເລື່ອງລາວກ່ຽວກັບການຄືງ ແລະ ການຟື້ນຄືນພຣະຊົນ (ລກ 22:8; ຢຮ 18:15; 19:26–27; 20:2–8; 21:1–2). ຕໍ່ມາໂຢຮັນໄດ້ຖືກເນລະເທດໄປຢູ່ເກາະປັດໂມ, ບ່ອນທີ່ລາວໄດ້ຂຽນ ພຣະທຳພຣະນິມິດ (ພນມ 1:9).

ໂຢຮັນຖືກກ່າວເຖິງເລື້ອຍໆໃນການເປີດເຜີຍຍຸກສຸດທ້າຍ (1 ນຟ 14:18–27; 3 ນຟ 28:6; ອທ 4:16; ຄພ 7; 27:12; 61:14; 77; 88:141). ເລື່ອງລາວເຫລົ່ານີ້ຢືນຢັນບັນທຶກພຣະຄຳພີຂອງໂຢຮັນ ແລະ ໃຫ້ຄວາມຮູ້ແຈ້ງກ່ຽວກັບຄວາມດີເດັ່ນຂອງລາວ ແລະ ຄວາມສຳຄັນຂອງວຽກງານຂອງພຣະຜູ້ເປັນເຈົ້າທີ່ມີໃຫ້ລາວເຮັດຢູ່ເທິງແຜ່ນດິນໂລກໃນສະໄໝຂອງພຣະຄຳພີໃໝ່ ແລະ ໃນຍຸກສຸດທ້າຍ. ພຣະຄຳພີຍຸກສຸດທ້າຍໄດ້ໃຫ້ຄວາມແຈ່ມແຈ້ງວ່າ ໂຢຮັນບໍ່ໄດ້ຕາຍ ແຕ່ໄດ້ຖືກອະນຸຍາດໃຫ້ມີຊີວິດຢູ່ເທິງແຜ່ນດິນໂລກຕໍ່ໄປ ເປັນຜູ້ຮັບໃຊ້ປະຕິບັດສາດສະໜາກິດ ຈົນເຖິງເວລາຂອງການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ (ຢຮ 21:20–23; 3 ນຟ 28:6–7; ຄພ 7).

*ສານຂອງໂຢຮັນ:* ເຖິງແມ່ນວ່າຜູ້ຂຽນສານສາມສະບັບເຫລົ່ານີ້ບໍ່ໄດ້ບອກຊື່ຂອງຕົນ, ແຕ່ວິທີການຂຽນບົ່ງບອກວ່າຕ້ອງເປັນອັກຄະສາວົກໂຢຮັນຢ່າງແນ່ນອນ ທີ່ໄດ້ຂຽນສານເຫລົ່ານັ້ນ.

1 ໂຢຮັນ 1 ໄດ້ຕັກເຕືອນໄພ່ພົນຂອງພຣະເຈົ້າໃຫ້ມີຄວາມສຳພັນກັບພຣະເຈົ້າ. ບົດທີ 2 ເນັ້ນໜັກວ່າໄພ່ພົນຮູ້ຈັກພຣະເຈົ້າໂດຍການເຊື່ອຟັງ ແລະ ແນະນຳພວກເຂົາບໍ່ໃຫ້ຮັກໂລກ. ບົດທີ 3 ຂໍໃຫ້ທຸກຄົນກາຍເປັນລູກພຣະເຈົ້າ ແລະ ຮັກຊຶ່ງກັນແລະກັນ. ບົດທີ 4 ອະທິບາຍວ່າ ພຣະເຈົ້າເປັນຄວາມຮັກ ແລະ ສະຖິດຢູ່ໃນຄົນທີ່ຮັກພຣະອົງ. ບົດທີ 5 ອະທິບາຍວ່າ ໄພ່ພົນຂອງພຣະເຈົ້າໄດ້ເກີດຈາກພຣະເຈົ້າ ຜ່ານຄວາມເຊື່ອໃນພຣະຄຣິດ.

2 ໂຢຮັນ ແມ່ນຄ້າຍຄືກັນກັບ 1 ໂຢຮັນ. ໃນນັ້ນ ໂຢຮັນຊື່ນຊົມເພາະສັດທາຂອງລູກຫລານຂອງ "ສຸພາບສະຕີທີ່ຖືກເລືອກໄວ້."

3 ໂຢຮັນ ຍ້ອງຍໍຄົນໜຶ່ງຊື່ວ່າ ຄາໂຢ ສຳ

ລັບຄວາມຊື່ສັດ ແລະ ຄວາມຊ່ວຍເຫລືອຂອງລາວຕໍ່ຜູ້ທີ່ຮັກຄວາມຈິງ.

*ພຣະກິດຕິຄຸນຂອງໂຢຮັນ:* ໃນພຣະຄຳພີໃໝ່, ອັກຄະສາວົກໂຢຮັນເປັນພະຍານວ່າ (1) ພຣະເຢຊູຄືພຣະຄຣິດ ຫລື ພຣະເມຊີອາ, ແລະ (2) ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ (ຢຮ 20:31). ພາບທີ່ມາຈາກຊີວິດຂອງພຣະເຢຊູ ທີ່ລາວບັນຍາຍໄດ້ຖືກເລືອກ ແລະ ຮຽບຮຽງຢ່າງລະມັດລະວັງ ດ້ວຍຈຸດປະສົງນີ້. ໜັງສືເລີ່ມຕົ້ນໂດຍການກ່າວເຖິງສະຖານະຂອງພຣະຄຣິດກ່ອນມະຕະ: ພຣະອົງໄດ້ຢູ່ນຳພຣະເຈົ້າ, ພຣະອົງໄດ້ເປັນພຣະເຈົ້າ, ແລະ ພຣະອົງໄດ້ເປັນພຣະຜູ້ສ້າງທຸກສິ່ງທັງປວງ. ພຣະອົງໄດ້ກຳເນີດໃນເນື້ອໜັງໃນຖານະພຣະບຸດອົງດຽວທີ່ຖືກຳເນີດຈາກພຣະບິດາ. ໂຢຮັນໄດ້ຕິດຕາມເບິ່ງການປະຕິບັດສາດສະໜາກິດຂອງພຣະເຢຊູ, ເນັ້ນໜັກຫລາຍກ່ຽວກັບຄວາມເປັນພຣະເຈົ້າຂອງພຣະອົງ ແລະ ການຟື້ນຄືນພຣະຊົນຂອງພຣະອົງ. ລາວໄດ້ຢືນຢັນຢ່າງແຈ່ມແຈ້ງວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ, ຢືນຢັນໂດຍສິ່ງມະຫັດສະຈັນ, ໂດຍພະຍານ, ໂດຍສາດສະດາ, ແລະ ໂດຍສຸລະສຽງຂອງພຣະຄຣິດເອງ. ໂຢຮັນສອນໂດຍການປຽບທຽບລະຫວ່າງຄວາມສະຫວ່າງ ແລະ ຄວາມມືດ, ຄວາມຈິງ ແລະ ຄວາມຜິດ, ຄວາມດີ ແລະ ຄວາມຊົ່ວ, ພຣະເຈົ້າ ແລະ ມານ. ບາງທີຄົງບໍ່ມີບັນທຶກອື່ນໃດທີ່ປະກາດເຖິງຄວາມສັກສິດຂອງພຣະເຢຊູ ແລະ ເຖິງຄວາມຂາດສັດທາຂອງຜູ້ປົກຄອງຊາວຢິວຢ່າງແຈ່ມແຈ້ງເໝືອນໜັງສືເຫລັ້ມນີ້.

ສ່ວນຫລາຍ ໂຢຮັນໄດ້ຂຽນກ່ຽວກັບການປະຕິບັດສາດສະໜາກິດຂອງພຣະຄຣິດໃນຢູດາຍ, ໂດຍສະເພາະ ອາທິດສຸດທ້າຍຂອງການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະອົງ, ໃນຂະນະທີ່ມັດທາຍ, ມາຣະໂກ, ແລະ ລູກາ ສ່ວນຫລາຍໄດ້ຂຽນກ່ຽວກັບການປະຕິບັດສາດສະໜາກິດຂອງພຣະອົງໃນຄາລີເລ. ຫລາຍສິ່ງຈາກພຣະກິດຕິຄຸນນີ້ ໄດ້ຖືກເຮັດໃຫ້ແຈ່ມແຈ້ງຂຶ້ນໂດຍການເປີດເຜີຍຍຸກສຸດທ້າຍ (ຄພ 7 ແລະ ຄພ 88:138–141).

ສຳລັບເຫດການຕ່າງໆໃນຊີວິດຂອງພຣະຜູ້ຊ່ວຍໃຫ້ລອດທີ່ໄດ້ບັນຍາຍໄວ້ໃນພຣະທຳໂຢຮັນ, ເບິ່ງ ຄວາມກົມກຽວຂອງພຣະກິດຕິຄຸນ ໃນພາກທ້ອຍທ້າຍ.

*ພຣະທຳພຣະນິມິດ: ເບິ່ງ* ພຣະນິມິດຂອງໂຢຮັນ

**ໂຢຮັນບັບຕິສະໂຕ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ; ອີລາຍ *ນຳອີກ*

ລູກຊາຍຂອງຊາຂາຣີຢາ ແລະ ເອລີຊາເບັດໃນພຣະຄຳພີໃໝ່. ໂຢຮັນໄດ້ຖືກສົ່ງໄປຕຽມຜູ້ຄົນເພື່ອຍອມຮັບພຣະເມຊີອາ (ຢຮ 1:19–27). ເພິ່ນຖືຂໍກະແຈຂອງຖານະປະໂລຫິດແຫ່ງອາໂຣນ ແລະ ໃຫ້ບັບຕິສະມາແກ່ພຣະເຢຊູຄຣິດ.

ເອຊາຢາ ແລະ ຄົນອື່ນໆໄດ້ທຳນາຍກ່ຽວກັບພາລະກິດຂອງໂຢຮັນ, **ອຊຢ** 40:3 (ມລກ 3:1; 1 ນຟ 10:7–10; 2 ນຟ 31:4).

ໄດ້ຖືກສົ່ງເຂົ້າຄຸກ ແລະ ຖືກຕັດຫົວ, **ມທ** 14:3–12 (ມຣກ 6:17–29). ຄັບຣີເອນໄດ້ປະກາດການເກີດຂອງໂຢຮັນ ແລະ ການປະຕິບັດສາດສະໜາກິດແກ່ຊາຂາຣີຢາ, **ລກ** 1:5–25. ພຣະເຢຊູໄດ້ສອນວ່າ ໂຢຮັນບັບຕິສະໂຕໄດ້ເປັນສາດສະດາທີ່ຍິ່ງໃຫຍ່, **ລກ** 7:24–28. ໄດ້ຮັບຮູ້ວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ, **ຢຮ** 1:29–34. ສານຸສິດຂອງໂຢຮັນໄດ້ກາຍເປັນສານຸສິດຂອງພຣະເຢຊູ, **ຢຮ** 1:25–29, 35–42 (ກຈກ 1:21–22). ບໍ່ໄດ້ເຮັດສິ່ງມະຫັດສະຈັນ, **ຢຮ** 10:41.

ໂດຍທີ່ໄດ້ຟື້ນຄືນຊີວິດແລ້ວ, ໄດ້ຖືກສົ່ງໄປແຕ່ງຕັ້ງໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ ສູ່ຖານະປະໂລຫິດແຫ່ງອາໂຣນ, **ຄພ** 13 (ຄພ 27:7–8; ຈສ—ປ 1:68–72). ໄດ້ຖືກແຕ່ງຕັ້ງໂດຍທູດຕອນເພິ່ນມີອາຍຸໄດ້ແປດມື້, **ຄພ** 84:28.

**ຣາເຊັນ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ *ນຳອີກ*

ໃນພຣະຄຳພີເດີມ, ເມຍຂອງຢາໂຄບ (ປຖກ

29–31; 35). ນາງ ຍັງ ເປັນ ແມ່ ຂອງ ໂຢເຊັບ ແລະ ເບັນຢາມິນ ນຳອີກ.

**ຣາຟາເອນ.** *ເບິ່ງ* ທູດ, ເທວະດາ *ນຳອີກ*

ທູດຂອງພຣະຜູ້ເປັນເຈົ້າ ຜູ້ໄດ້ມີສ່ວນຮ່ວມໃນການຟື້ນຟູທຸກສິ່ງທັງປວງ (ຄພ 128:21).

**ຣິກດອນ, ຊິດນີ**

ຜູ້ປ່ຽນໃຈເຫລື້ອມໃສ ແລະ ຜູ້ນຳໃນຕອນຕົ້ນຂອງການເລີ່ມຕົ້ນສາດສະໜາຈັກທີ່ໄດ້ຮັບການຟື້ນຟູ ໃນລະຫວ່າງປີ 1830 ແລະ ຕົ້ນປີ 1840. ຊິດນີ ຣິກດອນ ໄດ້ຮັບໃຊ້ຊົ່ວໄລຍະໜຶ່ງເປັນທີ່ປຶກສາທີໜຶ່ງຂອງໂຈເຊັບ ສະມິດ ໃນຝ່າຍປະທານສູງສຸດຂອງສາດສະໜາຈັກ (ຄພ 35; 58:50, 57; 63:55–56; 76:11–12, 19–23; 90:6; 93:44; 100:9–11; 124:126). ຕໍ່ມາລາວໄດ້ຕົກໄປ ແລະ ຖືກໄລ່ອອກ ໃນເດືອນກັນຍາ ປີ 1844.

**ຣຸດ.** *ເບິ່ງ* ໂບອາດ *ນຳອີກ*

ໃນພຣະຄຳພີເດີມ, ລູກໄພ້ໄທໂມອາບຂອງນາງນາໂອມີ ແລະ ເອລີເມເຫລັກ, ຜູ້ເປັນຊາວອິດສະຣາເອນ. ຫລັງຈາກສາມີຂອງນາງໄດ້ເສຍຊີວິດໄປ, ນາງຣຸດໄດ້ແຕ່ງງານກັບພີ່ນ້ອງຂອງນາງນາໂອມີ ຊື່ ໂອບາດ. ລູກຊາຍຂອງເຂົາເຈົ້າຊື່ ໂອເບັດ ເປັນບັນພະບຸລຸດຂອງດາວິດ ແລະ ພຣະຄຣິດ. ເລື່ອງລາວກ່ຽວກັບນາງຣຸດ ໄດ້ສະແດງອອກຢ່າງງົດງາມ ເຖິງການປ່ຽນໃຈເຫລື້ອມໃສຂອງຄົນທີ່ບໍ່ໄດ້ເປັນຄົນອິດສະຣາເອນ ເຂົ້າໃນບັນດາຄົນອິດສະຣາເອນ. ນາງຣຸດໄດ້ປະຖິ້ມພຣະເຈົ້າອົງເກົ່າຂອງນາງ ແລະ ຊີວິດເກົ່າ ແລ້ວໄດ້ມາເຂົ້າຮ່ວມກັບຄອບຄົວແຫ່ງສັດທາ ໃນການຮັບໃຊ້ພຣະເຈົ້າຂອງອິດສະຣາເອນ (ນຣ 1:16).

*ພຣະທຳນາງຣຸດ:* ບົດທີ 1 ບັນຍາຍຊີວິດຂອງເອລີເມເຫລັກ ແລະ ຄອບຄົວຂອງລາວທີ່ໂມອາບ. ຫລັງຈາກສາມີຂອງພວກນາງໄດ້ເສຍຊີວິດໄປ, ນາງນາໂອມີ ກັບ ນາງຣຸດໄດ້ໄປເບັດເລເຮັມ. ບົດທີ 2 ອະທິບາຍວ່ານາງຣຸດໄດ້ເກັບຮວງເຂົ້າເຮ່ຍຢູ່ໃນທົ່ງຂອງໂບອາດ. ບົດທີ 3 ບອກເຖິງວິທີທີ່ນາງນາໂອມີໄດ້ແນະນຳນາງຣຸດ ໃຫ້ໄປຫາລານຟາດເຂົ້າ ແລະ ນອນຢູ່ໃຕ້ຕີນຂອງໂບອາດ. ບົດທີ 4 ແມ່ນເລື່ອງລາວກ່ຽວກັບການແຕ່ງງານຂອງນາງຣຸດກັບໂບອາດ. ເຂົາເຈົ້າມີລູກຊາຍຊື່, ໂອເບັດ, ຊຶ່ງດາວິດ ແລະ ພຣະຄຣິດ ໄດ້ເປັນທາຍາດ.

**ຣູເບັນ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນ ພຣະ ຄຳພີ ເດີມ, ລູກ ຊາຍ ກົກ ຂອງ ຢາໂຄບນຳນາງເລອາ (ປຖກ 29:32; 37:21–22, 29; 42:22, 37). ເຖິງແມ່ນວ່າຣູເບັນເປັນລູກກົກ, ແຕ່ລາວໄດ້ເສຍສິດທິຂອງອ້າຍກົກໄປ ເພາະການບາບ (ປຖກ 35:22; 49:3–4).

*ເຜົ່າຂອງຣູເບັນ:* ພອນຂອງຢາໂຄບທີ່ມອບໃຫ້ແກ່ຣູເບັນ ມີຢູ່ໃນ ປະຖົມມະການ 49:3 ແລະ ພຣະບັນຍັດສອງ 33:6. ຈຳນວນຄົນໃນເຜົ່ານັບມື້ນັບຫລຸດໜ້ອຍຖອຍລົງ, ແລະ ເຖິງແມ່ນເຜົ່ານີ້ຍັງມີຢູ່ຕໍ່ໄປ, ແຕ່ມັນກໍບໍ່ມີຄວາມສຳຄັນຫລາຍທາງການເມືອງ. ສິດທິຂອງອ້າຍກົກຂອງຣູເບັນໄດ້ຕົກຢູ່ທີ່ໂຢເຊັບ ແລະ ພວກລູກຊາຍຂອງລາວ ເພາະວ່າໂຢເຊັບໄດ້ເປັນລູກກົກຂອງຢາໂຄບນຳນາງຣາເຊັນເມຍຄົນທີສອງ (1 ຂຄ 5:1–2).

**ເຣເບກາ.** *ເບິ່ງ* ອີຊາກ *ນຳອີກ*

ເມຍຂອງອີຊາກ, ປີຕຸໃນພຣະຄຳພີເດີມ (ປຖກ 24–27). ເຣເບກາໄດ້ເປັນແມ່ຂອງເອຊາວ ແລະ ຢາໂຄບ (ປຖກ 25:23–26).

**ເຣໂຮໂບອາມ.** *ເບິ່ງ* ໂຊໂລໂມນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງກະສັດໂຊໂລໂມນ. ເພິ່ນໄດ້ຂຶ້ນເປັນກະສັດແທນພໍ່ຂອງເພິ່ນ ແລະ ໄດ້ປົກຄອງເປັນເວລາສິບເຈັດປີໃນເຢຣູຊາເລັມ (1 ກສ 11:43; 14:21, 31). ໃນລະຫວ່າງການປົກຄອງຂອງເຣໂຮໂບອາມ, ອານາຈັກໄດ້ຖືກແບ່ງແຍກອອກເປັນອານາຈັກຂອງອິດສະຣາເອນ ຢູ່ພາກເໜືອ ແລະ ອານາຈັກຂອງຢູດາ ຢູ່ພາກໃຕ້ (1 ກສ 11:31–36; 12:19–20). ເຣໂຮໂບອາມ ໄດ້ປົກຄອງອານາຈັກຂອງຢູດາ.

**ແຮມີອຳທຳ**

ໃນ ພຣະ ຄຳ ພີ ມໍມອນ ເປັນ ທຳ ສູງ ທີ່ ຊາວ ໂຊຣຳ, ຊາວນີໄຟທີ່ປະຖິ້ມຄວາມເຊື່ອ, ໄດ້ໃຊ້ ອະທິຖານ (ແອວ 31:8–14, 21).

**ໂຣມ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໃນ ພຣະ ຄຳພີໃໝ່, ຈົດໝາຍທີ່ໂປໂລໄດ້ ຂຽນ ເຖິງໄພ່ ພົນຂອງ ພຣະ ເຈົ້າ ໃນ ກຸງ ໂຣມ. ເພິ່ນກຳລັງຄິດຈະໄປຢ້ຽມຢາມເຢຣູຊາເລັມ, ຊຶ່ງມີອັນຕະລາຍແນ່ນອນ. ຖ້າເພິ່ນລອດຊີວິດ ມາໄດ້, ເພິ່ນຫວັງວ່າເພິ່ນຈະໄດ້ໄປຢ້ຽມຢາມ ໂຣມຫລັງຈາກນັ້ນ. ພາກສ່ວນໜຶ່ງຂອງຈົດ ໝາຍ ແມ່ນຕັ້ງໃຈຈະຕຽມສາດສະໜາຈັກຢູ່ ທີ່ນັ້ນ ໃຫ້ພ້ອມທີ່ຈະຕ້ອນຮັບເພິ່ນ ເມື່ອເພິ່ນ ໄປເຖິງ. ຈົດໝາຍດັ່ງກ່າວຍັງຖືກຖືວ່າ ມີຖ້ອຍ ຄຳຂອງຄຳສອນບາງຢ່າງ ຊຶ່ງເຄີຍໂຕ້ຖຽງກັນ ແລະ ໂປໂລນັບຖືວ່າ ເວລານີ້ມັນໄດ້ຍຸດຕິລົງ ແລ້ວ.

ບົດທີ 1 ບັນຈຸຄຳທັກທາຍຂອງໂປໂລຕໍ່ຊາວ ໂຣມ. ບົດທີ 2–11 ບັນຈຸຂໍ້ປະກາດຫລາຍຂໍ້ ກ່ຽວກັບຄຳສອນ ເລື່ອງສັດທາ, ວຽກງານ, ແລະ ພຣະຄຸນ. ບົດທີ 12–16 ບັນຈຸຄຳສອນ ທີ່ປະຕິບັດໄດ້ ເລື່ອງຄວາມຮັກ, ໜ້າທີ່, ແລະ ຄວາມສັກສິດ.

**ລະດັບຂອງລັດສະໝີພາບ.** *ເບິ່ງ* ລັດສະໝີພາບຂອງຊັ້ນກາງ; ລັດສະໝີພາບຂອງຊັ້ນສູງ; ລັດສະໝີພາບຂອງຊັ້ນຕ່ຳ *ນຳອີກ*

ອານາຈັກທີ່ແຕກຕ່າງກັນໃນສະຫວັນ. ໃນ ການພິພາກສາຄັ້ງສຸດທ້າຍ, ແຕ່ລະຄົນຈະໄດ້ ຮັບບ່ອນພັກພາອາໄສນິລັນດອນໃນອານາຈັກ ໃດໜຶ່ງທີ່ມີລັດສະໝີພາບແຕກຕ່າງກັນ, ຍົກ ເວັ້ນແຕ່ບຸດແຫ່ງຄວາມຈິບຫາຍ.

ພຣະເຢຊູໄດ້ກ່າວວ່າ, ໃນຜາສາດພຣະ ບິດາເຈົ້າຂອງເຮົາ ມີທີ່ຢູ່ຫລາຍບ່ອນ, **ຢຮ** 14:2 (ອທ 12:32). ດວງອາທິດກໍມີຄວາມ ສະຫງ່າງາມຂອງດວງອາທິດໂດຍສະເພາະ, ດວງຈັນກໍມີຄວາມສະຫງ່າງາມຢ່າງໜຶ່ງ, ແລະ ດວງດາວກໍມີຄວາມສະຫງ່າງາມຢ່າງອື່ນອີກ, **1 ກຣທ** 15:40–41. ໂປໂລໄດ້ຖືກຮັບຂຶ້ນໄປ ເຖິງສະຫວັນຊັ້ນທີສາມ, **2 ກຣທ** 12:2.

ນິມິດມີສະຖານທີ່ ທີ່ປາດສະຈາກລັດສະໝີພາບ ແລະ ການລົງໂທດອັນເປັນນິດ, **ຄພ** 76:30–38, 43–45. ມີລັດສະໝີພາບຢູ່ສາມລະດັບ, **ຄພ** 76:50–113; 88:20–32.

**ລະບົບເອກະພາບ.** *ເບິ່ງ* ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ *ນຳອີກ*

ອົງການໜຶ່ງ ຊຶ່ງຜ່ານອົງການນີ້ ໄພ່ພົນຂອງ ພຣະເຈົ້າໃນສະໄໝຂອງການຟື້ນຟູສາດສະ ໜາຈັກ ໄດ້ສະແຫວງຫາທີ່ຈະດຳລົງຊີວິດຕາມ ກົດແຫ່ງການອຸທິດຖວາຍ. ຜູ້ຄົນໄດ້ແບ່ງປັນ ຊັບສົມບັດ, ສິ່ງຂອງ, ແລະ ຜົນປະໂຫຍດ, ໄດ້ ຮັບສິ່ງເຫລົ່ານີ້ ອີງຕາມຄວາມຕ້ອງການ ແລະ ຄວາມຈຳເປັນຂອງເຂົາເຈົ້າ (ຄພ 51:3; 78:1–15; 104).

ໃນ ເລື່ອງທາງ ໂລກຂອງພວກເຈົ້າ, ພວກ ເຈົ້າຕ້ອງ ເທົ່າທຽມກັນ, **ຄພ** 70:14. ໄພ່ພົນ ຂອງພຣະເຈົ້າໄດ້ຖືກຈັດຕັ້ງໃຫ້ເທົ່າທຽມກັນ ໃນທຸກສິ່ງ, **ຄພ** 78:3–11 (ຄພ 82:17–20). ພຣະຜູ້ເປັນເຈົ້າ ໄດ້ມອບ ລະບົບ ເອກະພາບ ເປັນການ ເປີດ ເຜີຍ ແລະ ພຣະບັນຍັດ, **ຄພ** 92:1. ຈອນ ຈອນສັນ ຄວນກາຍເປັນສະມາ ຊິກຂອງລະບົບເອກະພາບ, **ຄພ** 96:6–9. ພຣະ ຜູ້ເປັນເຈົ້າໄດ້ມອບຄຳແນະນຳທົ່ວໄປສຳລັບ ການດຳເນີນງານໃນລະບົບເອກະພາບ, **ຄພ** 104. ຜູ້ຄົນຂອງເຮົາບໍ່ໄດ້ພ້ອມໃຈກັນຕາມສະ ຫະພາບດັ່ງທີ່ກົດຂອງອານາຈັກຊັ້ນສູງຮຽກ ຮ້ອງ, **ຄພ** 105:1–13.

**ລະບຽບພວກເລວີ.** *ເບິ່ງ* ເພັນຕາຕຸກ *ນຳອີກ*

ໜັງສືໃນພຣະຄຳພີເດີມ ທີ່ບອກເຖິງໜ້າທີ່ ຂອງປະໂລຫິດຢູ່ໃນອິດສະຣາເອນ. ມັນເນັ້ນ ໜັກເຖິງຄວາມສັກສິດຂອງພຣະເຈົ້າ ແລະ ຫລັກທີ່ຜູ້ຄົນຂອງພຣະອົງສາມາດດຳລົງຊີວິດ ຕາມເພື່ອກາຍເປັນຄົນສັກສິດ. ຈຸດປະສົງຂອງ ມັນແມ່ນເພື່ອສອນກົດເກນແຫ່ງສິນທຳ ແລະ ຄວາມຈິງເລື່ອງສາດສະໜາຂອງກົດຂອງ ໂມເຊ ໂດຍທາງພິທີການຕ່າງໆ. ໂມເຊເປັນຜູ້ ຂຽນພຣະທຳລະບຽບພວກເລວີ.

ບົດທີ 1–7 ອະທິບາຍ ເຖິງພິທີການ ເຜົາຖວາຍ. ບົດທີ 8–10 ບັນຍາຍເຖິງພິທີການທີ່ຮັກສາໃນການອຸທິດຖວາຍ ຂອງປະໂລຫິດ. ບົດທີ 11 ອະທິບາຍເຖິງສິ່ງທີ່ຄວນກິນ ແລະ ບໍ່ຄວນກິນ ແລະ ສິ່ງໃດສະອາດ ແລະ ບໍ່ສະອາດ. ບົດທີ 12 ບອກກ່ຽວກັບຜູ້ຍິງຫລັງຈາກຄອດລູກ. ບົດທີ 13–15 ກົດທີ່ກ່ຽວຂ້ອງກັບພິທີການທີ່ບໍ່ສະອາດ. ບົດທີ 16 ບັນຈຸພິທີການທີ່ຕ້ອງຮັກສາໃນວັນແຫ່ງການຊົດໃຊ້. ບົດທີ 17–26 ບັນຈຸຫລັກຂອງກົດທີ່ກ່ຽວພັນກັບສາດສະໜາ ແລະ ການປະຕິບັດຕາມສັງຄົມ. ບົດທີ 27 ອະທິບາຍວ່າພຣະຜູ້ເປັນເຈົ້າໄດ້ບັນຊາຊາວອິດສະຣາເອນໃຫ້ອຸທິດພືດພັນ, ສັດລ້ຽງ, ແລະ ສັດໃຊ້ງານແດ່ພຣະຜູ້ເປັນເຈົ້າ.

**ລັກ, ການລັກ**

ຄືການເອົາບາງສິ່ງໄປຈາກບາງຄົນ ໃນວິທີທີ່ບໍ່ຊື່ສັດ ຫລື ບໍ່ຖືກຕ້ອງຕາມກົດໝາຍ. ພຣະຜູ້ເປັນເຈົ້າໄດ້ບັນຊາລູກໆຂອງພຣະອົງສະເໝີວ່າ ບໍ່ໃຫ້ລັກ (ອພຍ 20:15; ມທ 19:18; 2 ນຟ 26:32; ມຊຢ 13:22; ຄພ 59:6).

ຈົ່ງທ້ອນໂຮມຊັບສົມບັດສຳລັບຕົນໄວ້ໃນສະຫວັນ, ບ່ອນທີ່ໂຈນເຈາະລັກເອົາບໍ່ໄດ້, **ມທ** 6:19–21.

ຊາວນີໄຟເສຍໄຊເພາະຄວາມທະນົງຕົວ, ຄວາມຮັ່ງມີ, ການປຸ້ນຈີ້, ການຂີ້ລັກມັກສົກ, **ຮລມ** 4:12.

ຄົນທີ່ລັກ ແລະ ບໍ່ກັບໃຈ ຈະຖືກຂັບໄລ່ອອກໄປ, **ຄພ** 42:20. ຄົນທີ່ລັກຈະຖືກສົ່ງໄປຫາກົດໝາຍຂອງແຜ່ນດິນ, **ຄພ** 42:84–85.

**ລັດສະໝີພາບ.** *ເບິ່ງ* ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ຈິງ, ຄວາມຈິງ; ລະດັບຂອງລັດສະໝີພາບ *ນຳອີກ*

ໃນພຣະຄຳພີ, ລັດສະໝີພາບມັກຈະຖືກກ່າວເຖິງວ່າເປັນຄວາມສະຫວ່າງ ແລະ ຄວາມຈິງຂອງພຣະເຈົ້າ. ມັນຍັງຖືກກ່າວເຖິງວ່າເປັນການສັນລະເສີນ ຫລື ການໃຫ້ກຽດ ແລະ ຕໍ່ສະພາບຊີວິດນິລັນດອນສະເພາະໃດໜຶ່ງ ຫລື ຕໍ່ລັດສະໝີພາບຂອງພຣະເຈົ້າ.

ຈອມໂຍທາຊົງບໍລິສຸດ: ພຣະສະຫງ່າລາສີກໍແຜ່ກະຈາຍໄປທົ່ວໂລກ, **ອຊຢ** 6:3 (2 ນຟ 16:3).

ຕົວພວກເຮົາຈຶ່ງສະທ້ອນແສງແຫ່ງພຣະສະຫງ່າລາສີ, **2 ກຣທ** 3:18.

ພຣະອົງຈະຍົກພໍ່ຂຶ້ນເພື່ອຢູ່ກັບພຣະອົງໃນລັດສະໝີພາບ, **ແອວ** 36:28.

ລັດສະໝີພາບທີ່ໄດ້ຮັບຕອນຟື້ນຄືນຊີວິດຈະແຕກຕ່າງກັນອີງຕາມຄວາມຊອບທຳ, **ຄພ** 76:50–119. ລັດສະໝີພາບຂອງພຣະເຈົ້າເປັນຄວາມຮູ້ແຈ້ງ, **ຄພ** 93:36.

ລັດສະໝີພາບຂອງພຣະເຈົ້າ ຄືການທີ່ຈະເຮັດໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39. ຂ້າພະເຈົ້າໄດ້ເຫັນສອງພຣະອົງ, ຊຶ່ງຄວາມສະຫວ່າງ ແລະ ລັດສະໝີພາບນັ້ນເກີນກວ່າທີ່ຈະພັນລະນາໄດ້, **ຈສ—ປ** 1:17.

**ລັດສະໝີພາບຂອງຊັ້ນກາງ.** *ເບິ່ງ* ລະດັບຂອງລັດສະໝີພາບ *ນຳອີກ*

ລະດັບທີສອງໃນສາມລະດັບຂອງລັດສະໝີພາບ ຊຶ່ງຜູ້ຄົນຈະອາໄສຢູ່ ຫລັງຈາກການພິພາກສາຄັ້ງສຸດທ້າຍ.

ໂປໂລໄດ້ເຫັນລັດສະໝີພາບຂອງຊັ້ນກາງ, ປຽບເໝືອນລັດສະໝີພາບຂອງດວງເດືອນ, **1 ກຣທ** 15:40–41.

ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນ ໄດ້ເຫັນລັດສະໝີພາບຂອງຊັ້ນກາງ, **ຄພ** 76:71–80. ລັດສະໝີພາບຂອງຊັ້ນກາງ ລື່ນລັດສະໝີພາບຂອງຊັ້ນຕ່ຳ, **ຄພ** 76:91. ຄົນທີ່ບໍ່ສາມາດປະຕິບັດຕາມກົດຂອງອານາຈັກຊັ້ນກາງ ຈະທົນກັບລັດສະໝີພາບຂອງຊັ້ນກາງບໍ່ໄດ້, **ຄພ** 88:23, 30, 38.

**ລັດສະໝີພາບຂອງຊັ້ນສູງ.** *ເບິ່ງ* ສູງສົ່ງ, ຄວາມສູງສົ່ງ; ຊີວິດນິລັນດອນ; ລະດັບຂອງລັດສະໝີພາບ *ນຳອີກ*

ລະດັບສູງສຸດໃນສາມລະດັບຂອງລັດສະໝີພາບທີ່ຜູ້ຄົນສາມາດໄດ້ຮັບຫລັງຈາກຊີວິດນີ້. ຢູ່ທີ່ນີ້ ຄົນຊອບທຳຈະອາໄສຢູ່ໃນທີ່ປະທັບ

ຂອງພຣະເຈົ້າພຣະບິດາ ແລະ ພຣະບຸດຂອງ ພຣະອົງ ພຣະເຢຊູຄຣິດ.

ລັດສະໝີພາບຂອງຊັ້ນສູງກໍເປັນຢ່າງໜຶ່ງ, **1 ກຣທ** 15:40 (ຄພ 76:96). ໂປໂລໄດ້ຖືກຍົກຂຶ້ນໄປເຖິງສະຫວັນຊັ້ນທີສາມ, **2 ກຣທ** 12:2.

ລັດສະໝີພາບຊັ້ນສູງໄດ້ຖືກສະແດງໃຫ້ເຫັນໃນພາບນິມິດ, **ຄພ** 76:50–70. ຖ້າຫາກໄພ່ພົນຂອງພຣະເຈົ້າຢາກມີສະຖານທີ່ໃນໂລກຊັ້ນສູງ, ແລ້ວເຂົາຕ້ອງຕຽມຕົວ, **ຄພ** 78:7. ຄົນທີ່ບໍ່ສາມາດປະຕິບັດຕາມກົດຂອງອານາຈັກຊັ້ນສູງ ຈະທົນກັບລັດສະໝີພາບຂອງອານາຈັກຊັ້ນສູງບໍ່ໄດ້, **ຄພ** 88:15–22. ໃນລັດສະໝີພາບຂອງຊັ້ນສູງ ມີສະຫວັນສາມຊັ້ນ; ເງື່ອນໄຂໄດ້ຖືກຕັ້ງໄວ້ສຳລັບການໄດ້ຮັບຊັ້ນສູງສຸດ, **ຄພ** 131:1–2. ເດັກນ້ອຍຜູ້ໄດ້ຕາຍກ່ອນອາຍຸທີ່ຮູ້ຈັກຮັບຜິດຊອບກໍຈະລອດໃນອານາຈັກຊັ້ນສູງ, **ຄພ** 137:10.

**ລັດສະໝີພາບຂອງຊັ້ນຕ່ຳ.** *ເບິ່ງ* ລະດັບຂອງລັດສະໝີພາບ *ບຳອິກ*

ລະດັບຕ່ຳສຸດໃນສາມລະດັບຂອງລັດສະໝີພາບ ຊຶ່ງໃນນັ້ນຜູ້ຄົນຈະອາໄສຢູ່ ຫລັງຈາກການພິພາກສາ ເທື່ອສຸດທ້າຍ.

ໂປໂລໄດ້ເຫັນລັດສະໝີພາບຂອງດວງດາວ, **1 ກຣທ** 15:40–41.

ໂຈເຊັບ ສະມິດ ແລະ ຊິດນີ ຣິກດອນ ໄດ້ເຫັນລັດສະໝີພາບຂອງຊັ້ນຕ່ຳ, **ຄພ** 76:81–90. ຜູ້ອາໄສຂອງໂລກຊັ້ນຕ່ຳ ມີຈຳນວນຈົນນັບບໍ່ຖ້ວນດັ່ງດວງດາວ, **ຄພ** 76:109–112. ຄົນທີ່ບໍ່ສາມາດປະຕິບັດຕາມກົດຂອງອານາຈັກຊັ້ນຕ່ຳ ຈະທົນກັບລັດສະໝີພາບຂອງຊັ້ນຕ່ຳບໍ່ໄດ້, **ຄພ** 88:24, 31, 38.

**ລັດຖະທຳມະນູນ.** *ເບິ່ງ* ກົດ; ປົກຄອງ, ການປົກຄອງ *ບຳອິກ*

ໃນພຣະຄຳພີຄຳສອນ ແລະ ພັນທະສັນຍາ, "ລັດຖະທຳມະນູນ" ໝາຍເຖິງລັດຖະທຳມະນູນຂອງສະຫະລັດອາເມຣິກາ, ຊຶ່ງໄດ້ຖືກດົນໃຈຈາກເບື້ອງບົນ ເພື່ອຕຽມທາງໄວ້ສຳລັບການຟື້ນຟູພຣະກິດຕິຄຸນ.

ລັດຖະທຳມະນູນຄວນເປັນໄປເພື່ອນັບຖື, **ຄພ** 98:5–6. ພຣະຜູ້ເປັນເຈົ້າໄດ້ໃຫ້ມີການຈັດຕັ້ງລັດຖະທຳມະນູນຂຶ້ນ, **ຄພ** 101:77, 80.

**ລັດນີເຊີຣີ.** *ເບິ່ງ* ເຢຣູຊາເລັມໃໝ່

**ລາຊາໂຣ.** *ເບິ່ງ* ມາທາ; ມາຣີແຫ່ງເບັດທານີ *ບຳອິກ*

ໃນພຣະຄຳພີໃໝ່, ນ້ອງຊາຍຂອງນາງມາທາ ແລະ ນາງມາຣີ. ພຣະເຢຊູໄດ້ນຳລາວກັບຄືນມາມີຊີວິດ (ຢຮ 11:1–44; 12:1–2, 9–11). ນີ້ບໍ່ແມ່ນລາຊາໂຣຄົນດຽວກັນກັບຄົນຂໍທານ ໃນຄຳອຸປະມາທີ່ພຣະເຢຊູໄດ້ສອນ (ລກ 16:19–31).

**ລາບານ, ຜູ້ຮັກສາແຜ່ນຈາລຶກທອງເຫລືອງ.** *ເບິ່ງ* ແຜ່ນຈາລຶກທອງເຫລືອງ *ບຳອິກ*

ໃນພຣະຄຳພີມໍມອນ, ຊາຍຄົນໜຶ່ງຜູ້ຮັກສາແຜ່ນຈາລຶກທອງເຫລືອງຢູ່ໃນເມືອງເຢຣູຊາເລັມ ໃນວັນເວລາຂອງຄອບຄົວຂອງລີໄຮ. ລາບານໄດ້ຍຶດເອົາຊັບສິນ ແລະ ໄດ້ພະຍາຍາມຈະຂ້ານີໄຟກັບພວກອ້າຍຂອງລາວ (1 ນຟ 3:1–27). ພຣະວິນຍານໄດ້ຊັກຈູງນີໄຟໃຫ້ຂ້າລາບານ ເພື່ອຈະໄດ້ແຜ່ນຈາລຶກ (1 ນຟ 4:1–26).

**ລາບານ, ອ້າຍຂອງນາງເຣເບກາ.** *ເບິ່ງ* ເຣເບກາ *ບຳອິກ*

ໃນພຣະຄຳພີເດີມ, ອ້າຍຂອງນາງເຣເບກາ ແລະ ເປັນພໍ່ຂອງນາງເລອາ ແລະ ນາງລາເຊັນ, ເມຍຂອງຢາໂຄບ (ປຖກ 24:29–60; 27:43–44; 28:1–5; 29:4–29; 30:25–42; 31).

**ລາໂມໄນ.** *ເບິ່ງ* ອຳໂມນ, ລູກຊາຍຂອງໂມໄຊຢາ *ບຳອິກ*

ໃນພຣະຄຳພີມໍມອນ, ກະສັດຊາວເລມັນ ຜູ້ໄດ້ປ່ຽນໃຈເຫລື້ອມໃສໂດຍພຣະວິນຍານຂອງພຣະຜູ້ເປັນເຈົ້າ ແລະ ໂດຍການອອກແຮງງານ ແລະ ການສອນທີ່ດົນໃຈຂອງອຳໂມນ (ແອວ 17–19).

**ລິມໄຮ.** *ເບິ່ງ* ໂນອາ, ລູກຊາຍຂອງຊີນິບ *ບຳອິກ*

ໃນພຣະຄຳພີມໍມອນ, ກະສັດທີ່ຊອບທຳຂອງຊາວນີໄຟ ໃນແຜ່ນດິນນີໄຟ; ເພິ່ນເປັນ

ລູກ ຊາຍ ຂອງ ກະສັດ ໂນອາ (ມຊຍ 7:7–9). ກະສັດ ລີ ມໄຮ ໄດ້ ເຂົ້າ ເຮັດ ພັນທະ ສັນ ຍາ ທີ່ ຈະຮັບ ໃຊ້ພຣະ ເຈົ້າ (ມຊຍ 21:32). ເພິ່ນໄດ້ ນຳພາຜູ້ຄົນຂອງເພິ່ນອອກຈາກຄວາມເປັນ ທາດຂອງຊາວເລມັນ ແລະ ໄດ້ກັບຄືນສູ່ເຊຣາ ເຮັມລາ (ມຊຍ 22).

**ລີໄຮ, ບິດາຂອງນີໄຟ**

ໃນ ພຣະ ຄຳ ພີ ມໍມອນ, ສາດສະ ດາຊາວ ເຮັບເຣີຜູ້ໄດ້ນຳພາຄອບຄົວຂອງເພິ່ນ ແລະ ຜູ້ ຕິດຕາມເພິ່ນໜີໄປຈາກເຢຣູຊາເລັມ ໄປຫາ ແຜ່ນດິນແຫ່ງຄຳສັນຍາ ໃນຊີກໂລກເບື້ອງຕາ ເວັນຕົກ ປະມານ 600 ປີ ກ່ອນ ຄ.ສ. ລີໄຮເປັນ ສາດສະດາຄົນທຳອິດ ໃນບັນດາຜູ້ຄົນຂອງ ເພິ່ນໃນພຣະຄຳພີມໍມອນ.

ລີໄຮໄດ້ໜີຈາກເຢຣູຊາເລັມນຳຄອບຄົວ ຂອງເພິ່ນ ຕາມພຣະບັນຊາຂອງພຣະຜູ້ເປັນ ເຈົ້າ (1 ນຟ 2:1–4). ເພິ່ນ ເປັນລູກຫລານ ຂອງໂຢເຊັບ, ຜູ້ໄດ້ຖືກຂາຍໄປປະເທດເອຢິບ (1 ນຟ 5:14). ພຣະຜູ້ເປັນເຈົ້າໄດ້ປະທານ ພາບນິມິດໃຫ້ແກ່ເພິ່ນກ່ຽວກັບຕົ້ນໄມ້ແຫ່ງຊີ ວິດ (1 ນຟ 8:2–35). ລີໄຮ ແລະ ລູກໆຂອງ ເພິ່ນໄດ້ສ້າງເຮືອ ແລະ ໄດ້ຂັບເຮືອໄປຫາຊີກ ໂລກເບື້ອງຕາເວັນຕົກ (1 ນຟ 17–18). ເພິ່ນ ແລະ ລູກຫລານຂອງເພິ່ນໄດ້ມາຕັ້ງຖິ່ນຖານ ຢູ່ໃນແຜ່ນດິນໃໝ່ (1 ນຟ 18:23–25). ກ່ອນ ເພິ່ນໄດ້ຕາຍໄປ, ລີໄຮໄດ້ໃຫ້ພອນແກ່ພວກລູກ ຊາຍຂອງເພິ່ນ ແລະ ໄດ້ສອນພວກເຂົາກ່ຽວ ກັບພຣະຄຣິດ ແລະ ການອອກມາຂອງພຣະ ຄຳພີມໍມອນໃນຍຸກສຸດທ້າຍ (2 ນຟ 1:1–4:12).

*ໜັງສືລີໄຮ:* ໂຈເຊັບ ສະມິດ ໄດ້ເລີ່ມຕົ້ນ ດ້ວຍໜັງສືລີໄຮ ຕອນເພິ່ນແປພຣະຄຳພີ ມໍມອນ. ມັນເປັນບັນທຶກທີ່ມໍມອນໄດ້ຫຍໍ້ເຂົ້າ ກັນຈາກແຜ່ນຈາລຶກຂອງລີໄຮ. ຫລັງຈາກເພິ່ນ ແປສະບັບຕົ້ນໄດ້ 116 ໜ້າ ຈາກໜັງສືນີ້ແລ້ວ, ໂຈເຊັບໄດ້ມອບມັນໃຫ້ແກ່ມາຕິນ ແຮຣິສ, ຜູ້ ໄດ້ຊ່ວຍໂຈເຊັບຊົ່ວໄລຍະໜຶ່ງເປັນຜູ້ຂຽນໃຫ້ ເພິ່ນ ໃນການແປພຣະຄຳພີມໍມອນ. ແລ້ວໜັງ ສືເຫລົ່ານັ້ນໄດ້ເສຍໄປ. ໂຈເຊັບບໍ່ໄດ້ແປໜັງ ສືລີໄຮຄືນອີກ ເພື່ອເອົາມາແທນສະບັບຕົ້ນທີ່ ໄດ້ເສຍໄປ ແຕ່ໄດ້ແປເລື່ອງລາວອື່ນໆທີ່ກ່ຽວ ພັນກັນນັ້ນ ຈາກແຜ່ນຈາລຶກຄຳ (ເບິ່ງ ຄຳນຳ ຕໍ່ ຄພ 3; 10). ເລື່ອງລາວອື່ນໆເຫລົ່ານີ້ ເປັນ ໜັງສືຫົກສະບັບທຳອິດຂອງພຣະຄຳພີມໍມອນ.

**ລີໄຮ, ຜູ້ສອນສາດສະໜາຊາວນີໄຟ.** *ເບິ່ງ* ຮີ ລາມັນ, ລູກຊາຍຂອງຮີລາມັນ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຂອງຮີລາ ມັນ, ຜູ້ເປັນລູກຊາຍຂອງຮີລາມັນ. ລີໄຮເປັນ ຜູ້ສອນສາດສະໜາທີ່ຍິ່ງໃຫຍ່ (ຮລມ 3:21; 4:14).

ຖືກຕັ້ງຊື່ໃຫ້ວ່າລີໄຮ ເພື່ອໃຫ້ລະນຶກເຖິງບັນ ພະບຸລຸດຂອງເພິ່ນ, **ຮລມ** 5:4–6. ພ້ອມດ້ວຍ ນີໄຟ, ໄດ້ເຮັດໃຫ້ຫລາຍຄົນປ່ຽນໃຈເຫລື້ອມ ໃສ, ໄດ້ຖືກຈັບເຂົ້າຄຸກ, ໄດ້ຖືກລ້ອມດ້ວຍໄຟ, ແລະ ໄດ້ກ່າວກັບເຫລົ່າທູດ, **ຮລມ** 5:14–48. ໄດ້ຮັບການເປີດເຜີຍຫລາຍຢ່າງທຸກໆມື້, **ຮລມ** 11:23.

**ລີໄຮ, ຜູ້ບັງຄັບບັນຊາກອງທັບຂອງຊາວນີໄຟ**

ໃນພຣະຄຳພີມໍມອນ, ຜູ້ບັງຄັບບັນຊາກອງ ທັບຂອງຊາວນີໄຟ (ແອວ 43:35–53; 49:16–17; 52:27–36; 53:2; 61:15–21).

**ລີ້ນ.** *ເບິ່ງ* ການເວົ້າພາສາ, ຂອງປະທານແຫ່ງ *ນຳອີກ*

ສັນ ຍາ ລັກສຳລັບການປາກເວົ້າ. ໄພ່ພົນ ຂອງ ພຣະ ເຈົ້າຕ້ອງ ຄວບ ຄຸມ ລີ້ນຂອງຕົນ, ໝາຍຄວາມວ່າ ເຂົາເຈົ້າຕ້ອງຄວບຄຸມການ ປາກເວົ້າຂອງເຂົາເຈົ້າ. ລີ້ນ ກໍຍັງໝາຍເຖິງ ພາ ສາ ແລະ ຜູ້ຄົນ ນຳອີກ. ໃນທີ່ສຸດ, ທຸກຫົວເຂົ່າ ຈະຄຸລົງ ແລະ ທຸກລີ້ນຈະສາລະພາບ (ອຊຢ 45:23; ຣມ 14:11).

ຢ່າໃຫ້ຄຳເວົ້າຕົວະອອກຈາກປາກຂອງເຈົ້າ, **ພສສ** 34:13 (1 ປຕ 3:10). ຄົນທີ່ລະວັງຄຳເວົ້າ ຄວາມເດືອດຮ້ອນບໍ່ມາຕຳ, **ສພສ** 21:23.

ຖ້າຜູ້ໃດບໍ່ສາມາດຫ້າມລີ້ນຂອງຕົນແລ້ວ ທຳມະຂອງຜູ້ນັ້ນກໍບໍ່ມີປະໂຫຍດ, **ຢກບ** 1:26. ຖ້າຜູ້ໃດບໍ່ໄດ້ເຮັດຜິດທາງວາຈາ ຜູ້ນັ້ນກໍເປັນ ຄົນດີຄົບຖ້ວນ, **ຢກບ** 3:1–13. ພຣະກິດຕິຄຸນ ນີ້ຈະຖືກສັ່ງສອນແກ່ທຸກປະຊາຊາດ, ທຸກຕະ

ກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, **ພມມ** 14:6–7 (2 ນຟ 26:13; ມຊຢ 3:13, 20; ຄພ 88:103; 112:1).

ພຣະຜູ້ເປັນເຈົ້າປະທານໃຫ້ທຸກປະຊາຊາດດ້ວຍ ຊາດ ແລະ ພາ ສາ ຂອງ ຕົນ ເອ ງ ເພື່ອສອນພຣະຄຳຂອງພຣະອົງ, **ແອວ** 29:8. ແຜ່ນຈາລຶກເຫລົ່ານີ້ຈະອອກໄປຫາທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, **ແອວ** 37:4.

ໃຫ້ສະແຫວງຫາຄຳຂອງເຮົາ, ແລະ ເມື່ອນັ້ນ ລີ້ນຂອງເຈົ້າຈະມາຍອອກ, **ຄພ** 11:21. ທຸກຄົນຈະໄດ້ຍິນຄວາມສົມບູນຂອງພຣະກິດຕິຄຸນໃນຄຳວາຈາຂອງເຂົາເອງ, **ຄພ** 90:11.

**ລູກາ.** *ເບິ່ງ* ກິດຈະການຂອງອັກຄະສາວົກ; ພຣະທຳ *ນຳອີກ*

ຜູ້ຂຽນພຣະທຳລູກາ ແລະ ພຣະທຳກິດຈະການໃນພຣະຄຳພີໃໝ່ ແລະ ເປັນເພື່ອນສອນສາດສະໜາຂອງໂປໂລ. ລາວໄດ້ເກີດນຳພໍ່ແມ່ຊາວກຣີກ ແລະ ໄດ້ເຝິກຝ່າຍການແພດ (ກລຊ 4:14). ລູກາໄດ້ຮັບການສຶກສາເປັນຢ່າງດີ. ລາວໄດ້ແຈ້ງຕົນເອງວ່າເປັນເພື່ອນຮ່ວມງານຂອງອັກຄະສາວົກໂປໂລ ເມື່ອລາວໄດ້ເຂົ້າຮ່ວມກັບໂປໂລທີ່ເມືອງໂທອາດ (ກຈກ 16:10–11). ລູກາກໍໄດ້ຢູ່ນຳໂປໂລຄືກັນ ທີ່ຟີລິບປອຍ ຕອນໂປໂລເດີນທາງໄປເຢຣູຊາເລັມເປັນເທື່ອສຸດທ້າຍ (ກຈກ 20:6), ແລະ ທັງສອງໄດ້ຢູ່ນຳກັນຈົນເຂົາເຈົ້າໄດ້ມາເຖິງກຸງໂຣມ. ລູກາກໍໄດ້ຢູ່ນຳໂປໂລຄືກັນໃນລະຫວ່າງທີ່ລາວໄດ້ຖືກຄຸມຂັງຢູ່ຄຸກໃນກຸງໂຣມ (2 ຕມທ 4:11). ຕາມທີ່ບອກເລົ່າກັນມາ ລາວໄດ້ຖືກຂ້າຍ້ອນຄວາມເຊື່ອ.

*ພຣະທຳລູກາ:* ເລື່ອງລາວທີ່ລູກາໄດ້ຂຽນເຖິງພຣະເຢຊູຄຣິດ ແລະ ການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະອົງ. ພຣະທຳກິດຈະການຂອງອັກຄະສາວົກເປັນພາກຕໍ່ເນື່ອງຂອງພຣະທຳລູກາ. ລູກາໄດ້ຂຽນເລື່ອງລາວກ່ຽວກັບສາດສະໜາກິດຂອງພຣະເຢຊູໄວ້ເປັນຢ່າງດີ, ໂດຍສະເໜີພຣະເຢຊູວ່າເປັນພຣະຜູ້ຊ່ວຍໃຫ້ລອດຂອງທັງຊາວຢິວ ແລະ ຄົນຕ່າງຊາດ. ລາວໄດ້ຂຽນຫລາຍຢ່າງກ່ຽວກັບຄຳສອນຂອງພຣະເຢຊູ ແລະ ການປະຕິບັດຂອງພຣະອົງ. ໃນລູກາ ພວກເຮົາເຫັນຕອນດຽວເທົ່ານັ້ນກ່ຽວກັບການມາຢ້ຽມຢາມຂອງຄັບຣິເອນຕໍ່ຊາຂາຣີຢາ ແລະ ນາງມາຣີ (ລກ 1); ການມາຢ້ຽມຢາມຂອງຄົນລ້ຽງແກະຕໍ່ກຸມມານນ້ອຍເຢຊູ (ລກ 2:8–18); ພຣະເຢຊູທີ່ພຣະວິຫານຕອນມີອາຍຸໄດ້ສິບສອງພັນສາ (ລກ 2:41–52); ສາວົກເຈັດສິບໄດ້ຮັບມອບໝາຍ ແລະ ໄດ້ຖືກສົ່ງອອກໄປ (ລກ 10:1–24); ພຣະເຢຊູເຫື່ອຍ້ອຍຢາດເປັນເລືອດ (ລກ 22:44); ການສົນທະນາຂອງພຣະເຢຊູກັບພວກນັກໂທດຢູ່ເທິງໄມ້ກາງແຂນ (ລກ 23:39–43); ແລະ ພຣະເຢຊູໄດ້ກິນປາ ແລະ ນ້ຳເຜິ້ງ ຫລັງຈາກທີ່ພຣະອົງໄດ້ຟື້ນຄືນພຣະຊົນ (ລກ 24:42–43).

ສຳລັບລຳດັບເຫດການກ່ຽວກັບພຣະຊົນຊີບຂອງພຣະຜູ້ຊ່ວຍໃຫ້ລອດທີ່ບັນຍາຍໄວ້ຢູ່ໃນພຣະທຳລູກາ, ເບິ່ງ ຄວາມກົມກຽວຂອງພຣະກິດຕິຄຸນ ໃນພາກທ້ອຍທ້າຍ.

**ລູກກົກ.** *ເບິ່ງ* ສິດທິຂອງອ້າຍກົກ; ພຣະເຢຊູຄຣິດ *ນຳອີກ*

ໃນສະໄໝຂອງປິຕຸໃນສະໄໝບູຮານ, ລູກຊາຍກົກຈະໄດ້ຮັບສິດທິຂອງອ້າຍກົກ (ປຖກ 43:33) ແລະ ດັ່ງນັ້ນຈຶ່ງໄດ້ຮັບຕຳແໜ່ງຜູ້ນຳຄອບຄົວຫລັງຈາກພໍ່ໄດ້ເສຍຊີວິດໄປ. ລູກກົກຕ້ອງມີຄ່າຄວນທີ່ຈະຮັບເອົາໜ້າທີ່ຮັບຜິດຊອບນີ້ (1 ຂຄ 5:1–2) ແລະ ສາມາດສູນເສຍສິດທິຂອງອ້າຍກົກໄປໄດ້ເພາະຄວາມບໍ່ຊອບທຳ.

ພາຍໃຕ້ກົດຂອງໂມເຊ, ລູກຊາຍກົກໄດ້ຖືກນັບຖືວ່າເປັນຂອງພຣະເຈົ້າ. ລູກກົກໄດ້ຮັບມໍລະດົກສອງເທົ່າຂອງພໍ່ (ພບຍ 21:17). ຫລັງຈາກພໍ່ຂອງລາວໄດ້ເສຍຊີວິດໄປ, ລາວໄດ້ຮັບໜ້າທີ່ຮັບຜິດຊອບທີ່ຈະດູແລແມ່ ແລະ ເອື້ອຍນ້ອງຂອງລາວ.

ສັດໂຕເຖິກຫົວປີທຸກໆໂຕກໍເປັນຂອງພຣະເຈົ້າຄືກັນ. ສັດທີ່ສະອາດໄດ້ຖືກໃຊ້ເປັນເຄື່ອງຖວາຍ, ສ່ວນສັດທີ່ບໍ່ສະອາດຖືກໄຖ່ຖອນ ຫລື ຂາຍໄປ ຫລື ຂ້າຖິ້ມ (ອພຍ 13:2, 11–13; 34:19–20; ລລວ 27:11–13, 26–27).

ລູກກົກເປັນສັນຍາລັກເຖິງພຣະເຢຊູຄຣິດ ແລະ ການປະຕິບັດສາດສະໜາກິດຂອງພຣະ

ອົງຢູ່ໃນໂລກ, ເຕືອນຜູ້ຄົນວ່າພຣະເມຊີອາທີ່ຍິ່ງໃຫຍ່ຈະສະເດັດມາ (ມຊ 5:4–8; 6:63).

ພຣະເຢຊູ ເປັນລູກກົກຂອງລູກໆທາງວິນຍານ ຂອງພຣະບິດາເທິງສະຫວັນ ຂອງເຮົາ, ເປັນພຣະອົງດຽວທີ່ຖືກກຳເນີດຈາກພຣະບິດາໃນເນື້ອໜັງ, ແລະ ເປັນຜູ້ທຳອິດທີ່ລຸກຂຶ້ນຈາກຄວາມຕາຍໃນການຟື້ນຄືນພຣະຊົນ (ກລຊ 1:13–18). ໄພ່ພົນຂອງພຣະເຈົ້າທີ່ຊື່ສັດກາຍເປັນສະມາຊິກຂອງສາດສະໜາຈັກຂອງລູກກົກໃນຊົ່ວນິລັນດອນ (ຄພ 93:21–22).

ຈົ່ງຖວາຍລູກຊາຍກົກຂອງພວກເຈົ້າແກ່ເຮົາ, **ອພຍ** 22:29. ເຮົາໄດ້ໄວ້ຊີວິດລູກກົກຂອງຊາວອິດສະຣາເອນທຸກໆຄົນ, **ຈບຊ** 3:13. ພຣະອົງຈະໄດ້ເປັນບຸດກົກໃນທ່າມກາງພວກນ້ອງຫລາຍຄົນ, **ຣມ** 8:29. ພຣະອົງໄດ້ສົ່ງພຣະບຸດກົກຂອງພຣະອົງເຂົ້າມາໃນໂລກ, **ຮຣ** 1:6.

ພວກເຂົາຄືຜູ້ທີ່ເປັນສາດສະໜາຈັກຂອງພຣະບຸດຫົວປີ, **ຄພ** 76:54, 94.

ມັນໄດ້ຖືກມອບໃຫ້ຂ້າພະເຈົ້າຈາກບັນພະບຸລຸດ, ແມ່ນແຕ່ສິດທິຂອງລູກກົກ, **ອຣຮ** 1:3.

**ລູກຊາຍຂອງຮີລາມັນ.** *ເບິ່ງ* ຮີລາມັນ, ພວກລູກຊາຍຂອງ

**ລູກຊາຍຂອງໂມໄຊຢາ.** *ເບິ່ງ* ໂມໄຊຢາ, ພວກລູກຊາຍຂອງ

**ລູກໆຂອງພຣະຄຣິດ.** *ເບິ່ງ* ເກີດໃໝ່, ເກີດຈາກພຣະເຈົ້າ; ທີ່ຖືກກຳເນີດ; ບຸດ ແລະ ທິດາຂອງພຣະເຈົ້າ; ພຣະເຢຊູຄຣິດ *ບຳອິກ*

ຜູ້ທີ່ໄດ້ຮັບເອົາພຣະກິດຕິຄຸນຂອງພຣະເຢຊູຄຣິດ.

ຜູ້ເປັນໃຫຍ່ທີ່ສຸດໃນອານາຈັກສະຫວັນແມ່ນຜູ້ທີ່ຖ່ອມຕົວລົງເໝືອນດັ່ງເດັກນ້ອຍ, **ມທ** 18:1–4. ຈົ່ງເຊື່ອໃນຄວາມສະຫວ່າງນັ້ນເພື່ອຈະໄດ້ເປັນຄົນຝ່າຍຄວາມສະຫວ່າງ, **ຢຮ** 12:36.

ປະຖິ້ມມະນຸດທີ່ມີຈິດໃຈທຳມະດາ ແລະ ກາຍເປັນຄືກັນກັບເດັກນ້ອຍ, **ມຊຢ** 3:19; 27:25–26. ເພາະພັນທະສັນຍາ ພວກທ່ານຈະຖືກເອີ້ນວ່າ ລູກໆຂອງພຣະຄຣິດ, **ມຊຢ** 5:7. ຖ້າຫາກທ່ານຈະຍຶດຖືທຸກສິ່ງທີ່ດີໄວ້, ແລ້ວທ່ານຈະເປັນລູກຂອງພຣະຄຣິດຢ່າງແນ່ນອນ, **ມຣນ** 7:19.

ຫລາຍຕໍ່ຫລາຍຄົນທີ່ໄດ້ຮັບເອົາເຮົາ, ເຮົາໄດ້ມອບອຳນາດໃຫ້ເພື່ອກາຍເປັນບຸດຂອງເຮົາ, **ຄພ** 39:4. ຢ່າສູ່ຢ້ານ, ເດັກນ້ອຍເອີຍ, ເພາະພວກເຈົ້າເປັນຂອງເຮົາ, **ຄພ** 50:40–41.

ເຈົ້າເປັນໜຶ່ງໃນເຮົາ, ເປັນບຸດຂອງພຣະເຈົ້າ, **ມຊ** 6:68.

**ລູກໆຂອງພຣະເຈົ້າ.** *ເບິ່ງ* ບຸດ ແລະ ທິດາຂອງພຣະເຈົ້າ; ມະນຸດ

**ລູກຫລານຂອງອິດສະຣາເອນ.** *ເບິ່ງ* ອິດສະຣາເອນ

**ລູຊິເຟີ.** *ເບິ່ງ* ນະລົກ; ບຸດແຫ່ງຄວາມຈິບຫາຍ; ຜູ້ຕໍ່ຕ້ານພຣະຄຣິດ; ຜູ້ທຳລາຍ; ມານ *ບຳອິກ*

ຊື່ນີ້ໝາຍເຖິງ “ຜູ້ສ່ອງສະຫວ່າງ” ຫລື “ຜູ້ດຳລົງຄວາມສະຫວ່າງ”. ຍັງຮູ້ຈັກກັນວ່າເປັນໂອລົດແຫ່ງເວລາເຊົ້ານຳອີກ. ລູຊິເຟີເປັນພຣະບຸດຂອງພຣະບິດາເທິງສະຫວັນ ແລະ ໄດ້ນຳພາການກະບົດ ໃນຊີວິດກ່ອນມະຕະ. ຄຳວ່າລູຊິເຟີ ປະກົດພຽງເທື່ອດຽວຢູ່ໃນພຣະຄຣິສຕະທຳຄຳພີ (ອຊຢ 14:12). ການເປີດເຜີຍຍຸກສຸດທ້າຍ ໄດ້ບອກຂໍ້ມູນເພີ່ມເຕີມກ່ຽວກັບການຕົກຂອງລູຊິເຟີ (ຄພ 76:25–29).

ລູຊິເຟີໄດ້ຖືກຊັດລົງຂີ້ດິນ, **ອຊຢ** 14:12 (ລກ 10:18; 2 ນຟ 24:12).

ຫລັງຈາກການຕົກຂອງລາວ, ລາວກາຍເປັນຊາຕານ ແລະ ມານ, **ຄພ** 76:25–29 (ມຊ 4:1–4).

**ເລຂາທິການ**

ພຣະຄຳພີເດີມ ແລະ ພຣະຄຳພີໃໝ່ ໃຊ້ຄຳນີ້ໃນວິທີທາງທີ່ແຕກຕ່າງກັນໜ້ອຍໜຶ່ງ: (1) ໃນພຣະຄຳພີເດີມ, ໜ້າທີ່ຮັບຜິດຊອບຕົ້ນຕໍຂອງສະໝຽນ ຄືການຂຽນຂໍ້ພຣະຄຳພີລົງໄວ້ (ຍມຍ 8:8). (2) ສະໝຽນມັກຖືກກ່າວເຖິງໃນພຣະຄຳພີໃໝ່ ແລະ ບາງເທື່ອຖືກເອີ້ນວ່າ

ທະນາຍຄວາມ ຫລື ບັນດິດ. ເຂົາເຈົ້າເປັນຄົນຕັ້ງກົດໝາຍຢ່າງລະອຽດ ແລະ ນຳໃຊ້ມັນກັບສະພາບບ້ານເມືອງໃນສະໄໝຂອງເຂົາເຈົ້າ (ມທ 13:52; ມຣກ 2:16–17; 11:17–18; ລກ 11:44–53; 20:46–47).

**ເລຍໂຮນາ**

ໃນພຣະຄຳພີມໍມອນ, ລູກກົມທອງເຫລືອງທີ່ມີເຂັມສອງດວງຊີ້ທາງ—ເປັນເຂັມຊີ້ທິດ—ແລະ ເປັນຄຳແນະນຳທາງວິນຍານນຳອີກແກ່ລີໄຮ ແລະ ຜູ້ຕິດຕາມຂອງເພິ່ນ ເມື່ອເຂົາເຈົ້າຊອບທຳ. ພຣະຜູ້ເປັນເຈົ້າໄດ້ຈັດຫາເລຍໂຮນາໃຫ້ ແລະ ປະທານຄຳແນະນຳໃຫ້ດ້ວຍໃນນັ້ນ.

ລີໄຮໄດ້ພົບເຫັນລູກກົມທອງເຫລືອງທີ່ມີເຂັມສອງອັນ ທີ່ຊີ້ໄປທາງທີ່ລີໄຮ ແລະ ຄອບຄົວຂອງເພິ່ນຄວນໄປ, **1 ນຟ** 16:10. ລູກກົມທຳງານຕາມສັດທາ ແລະ ຄວາມພາກພຽນ, **1 ນຟ** 16:28–29 (ແອວ 37:40). ເບັນຢາມິນໄດ້ມອບລູກກົມໃຫ້ໂມໄຊຢາ, **ມຊຢ** 1:16. ລູກກົມ ຫລື ເຂັມຊີ້ທິດ ຖືກເອີ້ນວ່າເລຍໂຮນາ, **ແອວ** 37:38. ເລຍໂຮນາໄດ້ຖືກປຽບທຽບໃສ່ກັບພຣະຄຳຂອງພຣະຄຣິດ, **ແອວ** 37:43–45. ພະຍານສາມຄົນເຖິງພຣະຄຳພີມໍມອນຕ້ອງໄດ້ເຫັນເຂັມຊີ້ທິດທີ່ໄດ້ມອບໃຫ້ແກ່ລີໄຮ, **ຄພ** 17:1.

**ເລມັນ.** *ເບິ່ງ* ຊາວເລມັນ; ລີໄຮ, ບິດາຂອງນີໄຟ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍກົກຂອງລີໄຮກັບນາງຊາໄຣຢາ ແລະ ເປັນອ້າຍກົກຂອງນີໄຟ (1 ນຟ 2:5). ໂດຍທົ່ວໄປແລ້ວ ເລມັນໄດ້ເລືອກເຮັດສິ່ງທີ່ຊົ່ວ ແທນການເຮັດສິ່ງທີ່ດີ.

ເລມັນໄດ້ຈົ່ມໃຫ້ພໍ່ຂອງຕົນ, **1 ນຟ** 2:11–12. ໄດ້ກະບົດຕໍ່ນີໄຟ ນ້ອງຊາຍທີ່ຊອບທຳຂອງລາວ, **1 ນຟ** 7:6 (1 ນຟ 3:28–29). ບໍ່ຮັບສ່ວນໝາກໄມ້ ຈາກຕົ້ນໄມ້ແຫ່ງຊີວິດ ຢູ່ໃນພາບນິມິດຂອງລີໄຮ, **1 ນຟ** 8:35–36. ຄຳສາບແຊ່ງໄດ້ມາເຖິງເລມັນ ແລະ ຜູ້ທີ່ຕິດຕາມຂອງລາວ, **2 ນຟ** 5:21 (ແອວ 3:7).

**ເລມູເອນ.** *ເບິ່ງ* ຊາວເລມັນ; ລີໄຮ, ບິດາຂອງນີໄຟ; ເລມັນ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນທີສອງຂອງລີໄຮ ແລະ ອ້າຍຄົນໜຶ່ງຂອງນີໄຟ. ລາວກັບເລມັນໄດ້ຮ່ວມມືກັນຕໍ່ຕ້ານນີໄຟ.

ລີໄຮໄດ້ຕັກເຕືອນເລມູເອນໃຫ້ແນ່ວແນ່, ເໝືອນດັ່ງຮ່ອມພູ, **1 ນຟ** 2:10. ໄດ້ໃຈຮ້າຍໃຫ້ນີໄຟ ແລະ ຟັງຄຳຂອງເລມັນ, **1 ນຟ** 3:28. ຊາວເລມູເອນໄດ້ຖືກລວມເຂົ້າກັບບັນດາຊາວເລມັນ, **ຢຄ** 1:13–14 (ແອວ 47:35).

**ເລວີ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຄົນທີສາມຂອງຢາໂຄບ ແລະ ເລອາ (ປຖກ 29:34; 35:23). ເລວີໄດ້ກາຍເປັນບິດາຂອງເຜົ່າຕ່າງໆຂອງອິດສະຣາເອນ.

*ເຜົ່າຂອງເລວີ:* ຢາໂຄບໄດ້ອວຍພອນເລວີ ແລະ ລູກຫລານຂອງລາວ (ປຖກ 49:5–7, 28). ລູກຫລານຂອງເລວີ ໄດ້ປະຕິບັດສາດສະໜາກິດໃນຕຶກນະມັດສະການຂອງອິດສະຣາເອນ (ຈບຊ 1:47–54). ອາໂຣນເປັນຊາວເລວີ, ແລະ ລູກຫລານຂອງລາວກໍເປັນປະໂລຫິດ (ອພຍ 6:16–20; 28:1–4; 29). ຊາວເລວີໄດ້ຮັບໃຊ້ປະໂລຫິດ, ລູກຫລານຂອງອາໂຣນ (ຈບຊ 3:5–10; 1 ກສ 8:4). ບາງເທື່ອພວກເຂົາໄດ້ເປັນຄົນຫລິ້ນດົນຕີ (1 ຂຄ 15:16; ນມຢ 11:22); ໄດ້ຂ້າສັດຖວາຍ (2 ຂຄ 29:34; ອຊຣ 6:20); ແລະ ໂດຍທົ່ວໄປແລ້ວ ໄດ້ຮັບໃຊ້ຢູ່ໃນພຣະວິຫານ (ນມຢ 11:16). ຊາວເລວີໄດ້ອຸທິດຕົນເພື່ອຮັບໃຊ້ພຣະຜູ້ເປັນເຈົ້າ ເພື່ອດຳເນີນພິທີການໃຫ້ແກ່ລູກຫລານຂອງອິດສະຣາເອນ. ຊາວເລວີເອງກໍໄດ້ຖວາຍເພື່ອລູກຫລານຂອງອິດສະຣາເອນ (ຈບຊ 8:11–22); ດັ່ງນັ້ນ ພວກເຂົາຈຶ່ງເປັນກຳມະສິດພິເສດຂອງພຣະເຈົ້າ, ຖືກມອບໃຫ້ພຣະອົງແທນການເປັນລູກຫົວປີ (ຈບຊ 8:16). ພວກເຂົາບໍ່ໄດ້ຖືກແຕ່ງຕັ້ງ ແຕ່ໄດ້ຖືກເຮັດໃຫ້ສະອາດສຳລັບໜ້າທີ່ຂອງພວກເຂົາ (ຈບຊ 8:7–16). ພວກເຂົາບໍ່ມີແຜ່ນດິນເປັນມູນມໍລະດົກ ໃນການາອານ

(ຈບຊ 18:23–24), ແຕ່ພວກເຂົາໄດ້ຮັບສ່ວນສິບ (ຈບຊ 18:21), ສີ່ ສິບ ແປດ ເມືອງ (ຈບຊ 35:6), ແລະ ສິດທີ່ຈະຮັບການໃຫ້ທານຈາກຜູ້ຄົນໃນເວລາມີງານ (ພບຍ 12:18–19; 14:27–29).

**ເລອາ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ລາບານ, ອ້າຍຂອງນາງເຣເບກາ *ນຳອີກ*

ໃນ ພຣະ ຄຳ ພີ ເດີ ມ, ລູກ ສາວ ກົກ ຂອງລາບານ ແລະ ເປັນເມຍອີກຄົນໜຶ່ງຂອງຢາໂຄບ (ປຖກ 29). ນາງເລອາໄດ້ກາຍເປັນແມ່ຂອງລູກຊາຍຫົກຄົນ ແລະ ລູກສາວຄົນໜຶ່ງ (ປຖກ 29:31–35; 30:17–21).

**ເລອູເອນ.** *ເບິ່ງ* ເຢທະໂຣ

**ໂລກ.** *ເບິ່ງ* ບາເບນ, ບາບີໂລນ; ແຜ່ນດິນໂລກ; ມະຕະ, ຄວາມເປັນມະຕະ *ນຳອີກ*

ແຜ່ນດິນໂລກ; ສະຖານທີ່ທົດສອບສຳລັບມະນຸດທີ່ ເປັນ ມະຕະ. ເປັນຄຳອຸປະມານທີ່ໝາຍເຖິງຜູ້ຄົນທີ່ບໍ່ເຊື່ອຟັງພຣະບັນຍັດຂອງພຣະເຈົ້າ.

*ການເປັນຢູ່ຢ່າງມະຕະ:* ໃນໂລກນີ້ພວກເຈົ້າຈະມີຄວາມທຸກລຳບາກ, **ຢຮ** 16:33.

ຢ່າສູ້ຢ້ານ ແມ່ນແຕ່ຈົນເຖິງແກ່ຄວາມຕາຍ; ເພາະໃນໂລກນີ້ຄວາມສຸກຂອງພວກເຈົ້າບໍ່ບໍລິບູນ, **ຄພ** 101:36.

*ຜູ້ຄົນທີ່ບໍ່ເຊື່ອຟັງພຣະບັນຍັດ:* ເຮົາຈະລົງໂທດ ໂລກ ເພາະ ການ ບາບ ຂອງ ພວກ ເຂົາ, **ອຊຢ** 13:11 (2 ນຟ 23:11).

ຖ້າ ໂລກ ກຽດ ຊັງ ເຈົ້າທັງຫລາຍ, ຈົ່ງຮູ້ວ່າໂລກໄດ້ກຽດຊັງເຮົາກ່ອນແລ້ວ, **ຢຮ** 15:18–19.

ອາ ຄານ ໃຫຍ່ ແລະ ກວ້າງຂວາງ ຄືຄວາມຈອງຫອງຂອງໂລກ, **1 ນຟ** 11:36.

ໂລກພວມສຸກງອມຢູ່ໃນຄວາມຊົ່ວຮ້າຍ, **ຄພ** 18:6. ຮັກສາຕົນເອງໃຫ້ປາດສະຈາກມົນທິນຂອງໂລກ, **ຄພ** 59:9. ຄົນທີ່ຊື່ສັດ ແລະ ອົດທົນຈະເອົາຊະນະໂລກ, **ຄພ** 63:47. ພວກເຈົ້າຈະບໍ່ດຳລົງຊີວິດຕາມວິທີຂອງໂລກ, **ຄພ** 95:13.

*ທີ່ສຸດຂອງ ໂລກ:* ເຮົາກຳລັງສ້າງແຜ່ນດິນໂລກໃໝ່: ແລະ ເຫດການຕ່າງໆໃນອະດີດຈະຖືກລືມໄລໄປຢ່າງໝົດສິ້ນ, **ອຊຢ** 65:17 (ພນມ 21:1; ຫຼຊ 1:10).

ຄາວສິ້ນສຸດໂລກ ເຂົ້ານົກຈະຖືກກວາດເອົາໄປເຜົາໃສ່ໄຟ, **ມທ** 13:40, 49 (ມລກ 4:1; ຢຄ 6:3).

ເຮົາ ຈະ ເຮັດ ໃຫ້ ສວນ ອະງຸ່ນຂອງ ເຮົາ ໄໝ້ດ້ວຍໄຟ, **ຢຄ** 5:77 (ຄພ 64:23–24).

ພຣະຜູ້ເປັນເຈົ້າຈະທຳລາຍຊາຕານ ແລະວຽກງານຂອງມັນໃນບັ້ນທ້າຍຂອງໂລກ, **ຄພ** 19:3. ແຜ່ນດິນໂລກຈະຕາຍ, ແຕ່ຈະຖືກເຮັດໃຫ້ຄືນມີຊີວິດຊີວາອີກ, **ຄພ** 88:25–26.

ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ເອນົກເຫັນທີ່ສຸດຂອງໂລກ, **ມຊ** 7:67.

**ໂລກວິນຍານ.** *ເບິ່ງ* ຊີວິດກ່ອນເກີດ; ທີ່ສຸຂະເສີມ; ນະລົກ

**ໂລດ.** *ເບິ່ງ* ອັບຣາຮາມ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງຮາຣານ ແລະ ເປັນຫລານຊາຍຂອງອັບຣາຮາມ (ປຖກ 11:27, 31; ອຣຮ 2:4). ຮາຣານໄດ້ຕາຍໄປເພາະຄວາມອຶດຢາກຢູ່ໃນແຜ່ນດິນອູເຣ (ອຣຮ 2:1). ໂລດໄດ້ໜີຈາກອູເຣໄປກັບອັບຣາຮາມ ແລະ ນາງຊາຣາ ແລະ ໄດ້ເດີນທາງໄປກັບເພິ່ນ ໄປຫາການາອານ (ປຖກ 12:4–5). ໂລດໄດ້ເລືອກອາໄສຢູ່ເມືອງໂຊໂດມ. ພຣະຜູ້ເປັນເຈົ້າໄດ້ໃຫ້ຜູ້ສົ່ງຂ່າວມາເຕືອນໂລດ ໃຫ້ໜີໄປຈາກເມືອງໂຊໂດມ ກ່ອນພຣະຜູ້ເປັນເຈົ້າຈະທຳລາຍມັນ ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ (ປຖກ 13:8–13; 19:1, 13, 15); ເຖິງຢ່າງໃດກໍຕາມ, ເມຍຂອງໂລດໄດ້ຫັນຫລັງກັບໄປເບິ່ງການທຳລາຍ ແລະ ໄດ້ກາຍເປັນເສົາເກືອ (ປຖກ 19:26). ພຣະຄຳພີໃໝ່ບັນຈຸຂໍ້ອ້າງອີງກ່ຽວກັບ ໂລດ (ລກ 17:29; 2 ປຕ 2:6–7). ຊີວິດຂອງລາວຫລັງຈາກທີ່ໄດ້ແຍກຕົວອອກຈາກອັບຣາຮາມ ໄດ້ຖືກບັນຍາຍໄວ້ໃນ ປຖກ 13, 14, ແລະ 19.

**ໂລບ, ຄວາມໂລບ.** *ເບິ່ງ* ອິດສາ *ນຳອີກ*

ດັ່ງທີ່ໃຊ້ໃນພຣະຄຳພີ, ຄວາມໂລບຄືການ

ອິດສາບາງຄົນ ຫລື ມີຄວາມປາດຖະໜາອັນແຮງກ້າສຳລັບບາງສິ່ງ.

ຢ່າ ຢາກ ໄດ້ ຂອງ ຄົນ ອື່ນ, **ອພຍ** 20:17 (ພບຍ 5:21; ມຊຍ 13:24; ຄພ 19:25). ຜູ້ກຽດຊັງການ ສໍ້ໂກງກໍ່ປົກຄອງດົນນານໄດ້, **ສພສ** 28:16. ເມື່ອເຂົາຕ້ອງການໄຮ່ນາ ເຂົາກໍ່ຍຶດເອົາໂລດ, **ມກ** 2:2.

ຈົ່ງລະວັງຮັກສາຕົນໄວ້ໃຫ້ເວັ້ນຈາກຄວາມໂລບ, **ລກ** 12:15. ກົດບັນຍັດຫ້າມວ່າ ຢ່າໂລບ, **ຣມ** 7:7. ໃນຍຸກສຸດທ້າຍນັ້ນຄົນຈະເຫັນແກ່ເງິນຄຳ, **2 ຕມທ** 3:1–2.

ເມື່ອລາບານເຫັນຊັບສົມບັດຂອງພວກເຮົາ, ລາວຈຶ່ງມີຄວາມໂລບມາກຢາກໄດ້ມັນ, **1 ນຟ** 3:25.

ເຈົ້າຈະບໍ່ລັກໂລບຊັບສົມບັດຂອງເຈົ້າເອງ, **ຄພ** 19:26. ໃຫ້ເຊົາລັກໂລບ, **ຄພ** 88:123. ຢ່າໂລບເອົາສິ່ງທີ່ເປັນຂອງພີ່ນ້ອງຂອງພວກເຈົ້າ, **ຄພ** 136:20.

**ລໍ້ລວງ, ການລໍ້ລວງ.** *ເບິ່ງ* ມານ; ອົດທົນ, ຄວາມອົດທົນ; ອຳເພີໃຈ *ນຳອີກ*

ການທົດສອບຄວາມສາມາດຂອງບຸກຄົນວ່າຈະເລືອກຄວາມດີ ຫລື ຄວາມເຊື່ອ; ການລໍ້ໃຈໃຫ້ເຮັດບາບ ແລະ ຕິດຕາມຊາຕານ ແທນທີ່ຈະຕິດຕາມພຣະເຈົ້າ.

ຂໍຢ່າພາຂ້ານ້ອຍເຂົ້າໄປໃນການທົດລອງ, ແຕ່ຂໍໂຜດໃຫ້ພົ້ນຈາກມານຊົ່ວຮ້າຍ, **ມທ** 6:13 (3 ນຟ 13:12). ພຣະເຈົ້າຈະບໍ່ຍອມໃຫ້ພວກເຈົ້າຖືກທົດລອງ ເກີນກວ່າທີ່ພວກເຈົ້າຈະທົນໄດ້, **1 ກຣທ** 10:13. ພຣະຄຣິດໄດ້ຖືກທົດລອງຄືກັນກັບເຮົາ, **ຮຣ** 4:14–15. ຄົນທີ່ອົດທົນຕໍ່ການທົດລອງໃຈກໍ່ເປັນສຸກ, **ຢກບ** 1:12–14.

ການລໍ້ລວງຂອງຜູ້ປີລະປັກ ບໍ່ສາມາດມີອຳນາດເໜືອກວ່າຄົນທີ່ເຊື່ອຟັງພຣະຄຳຂອງພຣະເຈົ້າ, **1 ນຟ** 15:24 (ຣລມ 5:12). ມະນຸດກະທຳດ້ວຍຕົວເອງບໍ່ໄດ້ ນອກຈາກຈະເປັນໄປເພາະເຂົາຖືກຊັກຈູງໂດຍຢ່າງໜຶ່ງ ຫລື ອີກຢ່າງໜຶ່ງ, **2 ນຟ** 2:11–16. ເຝົ້າເບິ່ງ ແລະ ອະທິຖານສະເໝີ, ເພື່ອພວກທ່ານຈະບໍ່ຖືກລໍ້ລວງຈົນເກີນກວ່າທີ່ພວກທ່ານຈະອົດທົນໄດ້, **ແອວ** 13:28. ຈົ່ງສິດສອນພວກເຂົາໃຫ້ຕ້ານທານການລໍ້ລວງທຸກຢ່າງຂອງມານ, ດ້ວຍສັດທາຂອງພວກເຂົາຊຶ່ງມີໃນພຣະເຢຊູຄຣິດເຈົ້າ, **ແອວ** 37:33. ອະທິຖານຢູ່ສະເໝີ ເພື່ອເຈົ້າຈະບໍ່ໄດ້ເຂົ້າໄປສູ່ການລໍ້ລວງ, **3 ນຟ** 18:15, 18 (ຄພ 20:33; 31:12; 61:39).

ຈົ່ງລະວັງຄວາມຈອງຫອງ, ຖ້າບໍ່ດັ່ງນັ້ນເຈົ້າຈະເຂົ້າໄປສູ່ການລໍ້ລວງ, **ຄພ** 23:1. ອາດາມໄດ້ຂຶ້ນຢູ່ກັບຄວາມປະສົງຂອງມານ ເພາະລາວຜ່າຍແພ້ຕໍ່ການລໍ້ລວງ, **ຄພ** 29:39–40.

ຂ້າພະເຈົ້າຖືກປ່ອຍໄວ້ກັບການລໍ້ລວງນາໆປະການ, **ຈສ—ປ** 1:28.

**ລອດ, ຄວາມລອດ.** *ເບິ່ງ* ຄວາມຕາຍທາງວິນຍານ; ຄວາມຕາຍທາງຮ່າງກາຍ; ສູງສົ່ງ, ຄວາມສູງສົ່ງ; ຊົດໃຊ້, ການຊົດໃຊ້; ໄຖ່, ການໄຖ່, ຖືກໄຖ່; ແຜນແຫ່ງການໄຖ່; ພຣະຄຸນ; ພຣະເຢຊູຄຣິດ *ນຳອີກ*

ທີ່ຈະລອດຈາກຄວາມຕາຍທາງຮ່າງກາຍ ແລະ ທາງວິນຍານ. ທຸກຄົນຈະລອດຈາກຄວາມຕາຍທາງຮ່າງກາຍ ໂດຍພຣະຄຸນຂອງພຣະເຈົ້າ, ຜ່ານຄວາມຕາຍ ແລະ ການຟື້ນຄືນພຣະຊົນຂອງພຣະເຢຊູຄຣິດ. ແຕ່ລະຄົນສາມາດລອດຈາກຄວາມຕາຍທາງວິນຍານ ໂດຍພຣະຄຸນຂອງພຣະເຈົ້າ, ຜ່ານສັດທາໃນພຣະເຢຊູຄຣິດ. ສັດທານີ້ສະແດງໃຫ້ປະຈັກ ໃນຊີວິດທີ່ເຊື່ອຟັງຕໍ່ກົດ ແລະ ພິທີການຂອງພຣະກິດຕິຄຸນ ແລະ ການຮັບໃຊ້ແດ່ພຣະຄຣິດ.

ພຣະຜູ້ເປັນເຈົ້າເປັນຄວາມສະຫວ່າງ ແລະ ເປັນຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ, **ພສສ** 27:1. ພຣະອົງເປັນຜູ້ປົກປ້ອງ ແລະ ເປັນຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ, **ພສສ** 62:2.

ຂ່າວປະເສີດນັ້ນເປັນລິດເດດອຳນາດຂອງພຣະເຈົ້າ ທີ່ໃຫ້ໄດ້ຮັບຄວາມພົ້ນ, **ຣມ** 1:16 (ຄພ 68:4). ຈົ່ງອົດສາພະຍາຍາມເພື່ອໃຫ້ໄດ້ຄວາມພົ້ນ ດ້ວຍຄວາມຢຳເກງ, **ຟລປ** 2:12. ພຣະເຈົ້າໄດ້ເລືອກພວກເຈົ້າ ເພື່ອໂຜດໃຫ້ພົ້ນຜ່ານການຊຳລະໃຫ້ບໍລິສຸດ, **2 ທສນ** 2:13.

ຄວາມລອດເປັນຂອງໃຫ້ລ້າໆ, **2 ນຟ** 2:4.

ບໍ່ມີຂອງປະທານໃດທີ່ຍິ່ງໃຫຍ່ໄປກວ່າຂອງປະທານແຫ່ງຄວາມລອດ, **ຄພ** 6:13.

ພຣະເຢຊູຄຣິດເປັນພຣະນາມດຽວເທົ່ານັ້ນ ຊຶ່ງໂດຍພຣະນາມນັ້ນຄວາມລອດຈະມາເຖິງ, **ມຊ** 6:52 (ກຈກ 4:10–12). ພວກເຮົາເຊື່ອວ່າໂດຍທາງການຊົດໃຊ້ຂອງພຣະຄຣິດ, ມະນຸດຊາດທັງປວງຈະລອດໄດ້, **ຫຼຊ** 1:3.

*ຄວາມລອດຂອງເດັກນ້ອຍ:* ຖ້າພວກເຈົ້າບໍ່ກາຍເປັນເໝືອນເດັກນ້ອຍ, ພວກເຈົ້າຈະເຂົ້າໄປໃນອານາຈັກສະຫວັນບໍ່ໄດ້ຈັກເທື່ອ, **ມທ** 18:3.

ເດັກນ້ອຍໆມີຊີວິດນິລັນດອນ, **ມຊຢ** 15:25. ການ ບັບຕິສະມາ ໃຫ້ເດັກແດງທາລົກເປັນຄວາມຊົ່ວທີ່ໜ້າກຽດຊັງ, ແລະ ເດັກນ້ອຍໆໄດ້ຮັບຄວາມລອດເພາະການຊົດໃຊ້ຂອງພຣະຄຣິດ, **ມຣນ** 8:8–24.

ເດັກນ້ອຍໆໄດ້ຮັບການໄຖ່ຜ່ານພຣະອົງດຽວທີ່ຖືກຳເນີດ, ຊາຕານບໍ່ສາມາດລໍ້ລວງເຂົາ, **ຄພ** 29:46–47. ເດັກນ້ອຍຈະຕ້ອງຖືກສິດສອນພຣະກິດຕິຄຸນ ແລະ ຮັບບັບຕິສະມາເມື່ອມີອາຍຸໄດ້ແປດປີ, **ຄພ** 68:25–28. ເດັກນ້ອຍໆໄດ້ຮັບການຊຳລະໃຫ້ບໍລິສຸດຜ່ານພຣະເຢຊູຄຣິດ, **ຄພ** 74:7. ມະນຸດຈຶ່ງກາຍເປັນຄົນບໍລິສຸດຄືນອີກ, ຢູ່ໃນສະພາບເດັກແດງທາລົກຂອງພວກເຂົາ, **ຄພ** 93:38. ເດັກນ້ອຍທັງປວງຜູ້ໄດ້ຕາຍກ່ອນອາຍຸທີ່ຮູ້ຈັກຮັບຜິດຊອບກໍລອດໃນອານາຈັກຊັ້ນສູງ, **ຄພ** 137:10.

ເດັກນ້ອຍປາດສະຈາກບາບຈາກການວາງຮາກຖານຂອງໂລກ, **ມຊ** 6:54.

**ເລືອກ, ການເລືອກ.** *ເບິ່ງ* ເອີ້ນ, ການເອີ້ນ ແລະ ການເລືອກ *ນຳອີກ*

ອີງຕາມການມີຄ່າຄວນກ່ອນມະຕະ, ພຣະເຈົ້າໄດ້ເລືອກຜູ້ທີ່ຈະເປັນລູກຫລານຂອງອັບຣາຮາມ ແລະ ເຊື້ອສາຍອິດສະຣາເອນ ແລະ ກາຍເປັນຜູ້ຄົນແຫ່ງພັນທະສັນຍາ (ພບຍ 32:7–9; ອຣຮ 2:9–11). ຜູ້ຄົນເຫລົ່ານີ້ໄດ້ຮັບພອນ ແລະ ໜ້າທີ່ພິເສດ ເພື່ອວ່າເຂົາເຈົ້າຈະໄດ້ເປັນພອນໃຫ້ແກ່ປະຊາຊາດທັງປວງຂອງໂລກ (ຣມ 11:5–7; 1 ປຕ 1:2; ແອວ 13:1–5; ຄພ 84:99). ເຖິງຢ່າງໃດກໍຕາມ, ແມ່ນແຕ່ຜູ້ທີ່ຖືກເລືອກ ກໍຕ້ອງຖືກເອີ້ນ ແລະ ຖືກແຕ່ງຕັ້ງໃນຊີວິດນີ້ ກ່ອນຈະສາມາດໄດ້ຮັບຄວາມລອດ.

**ເລືອກ, ໄດ້ເລືອກ, ຖືກເລືອກ.** *ເບິ່ງ* ອິດສະລະ, ອິດສະລະພາບ; ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ; ອຳເພີໃຈ *ນຳອີກ*

ເມື່ອພຣະຜູ້ເປັນເຈົ້າຄັດເລືອກ, ຫລື ເລືອກ, ເປັນບຸກຄົນ ຫລື ເປັນກຸ່ມ, ຕາມປົກກະຕິແລ້ວແມ່ນໄດ້ເອີ້ນເຂົາເຈົ້າເພື່ອຮັບໃຊ້ດ້ວຍ.

ຈົ່ງຕັດສິນໃຈໃນມື້ນີ້ວ່າ ພວກເຈົ້າຈະບົວລະບັດຮັບໃຊ້ຜູ້ໃດ, **ຢຊ** 24:15 (ແອວ 30:8; ມຊ 6:33). ເຮົາທົດສອບພວກເຈົ້າໃຫ້ທົນທຸກໃນແປວໄຟ, **ອຊຢ** 48:10 (1 ນຟ 20:10).

ຫລາຍຄົນຖືກເຊີນມາ, ແຕ່ມີໜ້ອຍຄົນທີ່ຖືກເລືອກໄວ້, **ມທ** 22:14 (ມທ 20:16; ຄພ 95:5; 121:34, 40). ບໍ່ແມ່ນເຈົ້າທັງຫລາຍໄດ້ເລືອກເອົາເຮົາ, ແຕ່ຝ່າຍເຮົາໄດ້ເລືອກເອົາພວກເຈົ້າ, **ຢຮ** 15:16. ພຣະເຈົ້າໄດ້ເລືອກເອົາສິ່ງທີ່ມະນຸດຖືວ່າໂງ່ ເພື່ອໃຫ້ຄົນສະຫລາດຖືກອັບອາຍ, **1 ກຣທ** 1:27. ພຣະອົງໄດ້ເລືອກພວກເຮົາໄວ້ຕັ້ງແຕ່ກ່ອນການວາງຮາກຖານຂອງໂລກ, **ອຟຊ** 1:4.

ພວກເຮົາເປັນອິດສະລະທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ ຫລື ຈະເລືອກການເປັນຊະເລີຍ ແລະ ຄວາມຕາຍ, **2 ນຟ** 2:27.

ບັນດາຜູ້ທີ່ສູງສັກ ແລະ ຍິ່ງໃຫຍ່ ໄດ້ຖືກເລືອກໄວ້ແຕ່ຕອນຕົ້ນ, **ຄພ** 138:55–56.

ອິດສະຣາເອນໄດ້ຖືກພຣະເຈົ້າເລືອກໄວ້, **ມຊ** 1:26. ອັບຣາຮາມໄດ້ຖືກເລືອກໄວ້ກ່ອນເພິ່ນໄດ້ມາເກີດ, **ອຣຮ** 3:23.

**ເລືອດ, ໂລຫິດ.** *ເບິ່ງ* ເສຍສະລະ, ການເສຍສະລະ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ *ນຳອີກ*

ຊາວອິດສະຣາເອນໃນສະໄໝບູຮານ ແລະ ຫລາຍວັດທະນະທຳໃນປະຈຸບັນຖືວ່າເປັນຈຸດໃຈກາງຂອງຊີວິດຫລື ເປັນພະລັງທີ່ສຳຄັນຂອງເນື້ອໜັງທັງປວງ. ໃນສະໄໝຂອງພຣະຄຳພີເດີມ ພຣະຜູ້ເປັນເຈົ້າໄດ້ສັ່ງຫ້າມຊາວ

ອິດສະ ຣາເອນ ບໍ່ ໃຫ້ ກິນ ເລືອດ ເປັນ ອາຫານ (ລລວ 3:17; 7:26–27; 17:10–14).

ອຳນາດການຊົດ ໃຊ້ ຂອງ ການ ເສຍສະລະ ແມ່ນຢູ່ທີ່ໂລຫິດ ເພາະວ່າໂລຫິດຖືເປັນສິ່ງຈຳເປັນຕໍ່ຊີວິດ. ການຖວາຍສັດໃນພຣະຄຳພີເດີມ ເປັນສັນຍາລັກຂອງການ ເສຍສະລະອັນຍິ່ງໃຫຍ່ ຊຶ່ງໄດ້ເຮັດໂດຍພຣະເຢຊູຄຣິດ (ລລວ 17:11; ມຊ 5:5–7). ໂລຫິດທີ່ເປັນການຊົດໃຊ້ຂອງພຣະເຢຊູຄຣິດ ໄດ້ຊຳລະລ້າງຄົນທີ່ກັບໃຈຈາກບາບ (1 ຢຮ 1:7).

ເຫື່ອຂອງພຣະອົງຄືກັບວ່າ ເປັນເລືອດໄຫລຢາດລົງດິນເປັນເມັດໃຫຍ່, **ລກ** 22:44. ພວກເຮົາໄດ້ຮັບການຊຳລະ ໃຫ້ບໍລິສຸດໂດຍການຫລັ່ງໂລຫິດຂອງພຣະຄຣິດ, **ຮຣ** 10:1–22.

ໂລຫິດໄຫລອອກຈາກທຸກຂຸມຂົນ, **ມຊຢ** 3:7 (ຄພ 19:18).

ພຣະຜູ້ເປັນ ເຈົ້າ ໄດ້ຫລັ່ງ ໂລຫິດເພື່ອການປົດບາບ, **ຄພ** 27:2. ພຣະເຢຊູໄດ້ເຮັດໃຫ້ເກີດການຊົດໃຊ້ອັນສົມບູນຜ່ານການຫລັ່ງໂລຫິດຂອງພຣະອົງ, **ຄພ** 76:69.

ໂດຍໂລຫິດພວກເຈົ້າຈຶ່ງໄດ້ຮັບການຊຳລະໃຫ້ບໍລິສຸດ, **ມຊ** 6:60.

**ລຳດັບການສືບເຊື້ອສາຍ.** *ເບິ່ງ* ຄອບຄົວ; ຄວາມລອດສຳລັບຄົນຕາຍ; ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາແທນຄົນຕາຍ; ປື້ມແຫ່ງຄວາມຊົງຈຳ; ພິທີການ—ພິທີການກະທຳແທນ; ລອດ, ຄວາມລອດ *ນຳອີກ*

ບັນທຶກໜຶ່ງທີ່ບອກເຖິງເຊື້ອສາຍໃນຄອບຄົວ. ໃນບ່ອນທີ່ຕຳແໜ່ງຂອງຖານະປະໂລຫິດ ຫລື ພອນສະເພາະບາງຢ່າງຖືກຈຳກັດໄວ້ສຳລັບຄອບຄົວໃດຄອບຄົວໜຶ່ງ, ແລ້ວການສືບລຳດັບເຊື້ອສາຍໃນພຣະຄຳພີຈຶ່ງສຳຄັນຫລາຍ (ປຖກ 5; 10; 25; 46; 1 ຂຄ 1–9; ອຊຣ 2:61–62; ນມຢ 7:63–64; ມທ 1:1–17; ລກ 3:23–38; 1 ນຟ 3:1–4; 5:14–19; ຈຣ 1:1–2). ໃນສາດສະໜາຈັກທີ່ຖືກຟື້ນຟູຄືນມາໃໝ່ໃນວັນນີ້, ສະມາຊິກຂອງສາດສະໜາຈັກໄດ້ດຳເນີນການຄົ້ນຫາເຊື້ອສາຍຂອງຕົນ, ເພື່ອຊອກຫາບັນພະບຸລຸດທີ່ຖືກຕ້ອງ ເພື່ອວ່າເຂົາເຈົ້າຈະໄດ້ເຮັດພິທີການຊ່ວຍໃຫ້ລອດແທນບັນພະບຸລຸດຂອງເຂົາເຈົ້າ. ພິທີການເຫລົ່ານີ້ໃຊ້ໄດ້ກັບຜູ້ທີ່ລ່ວງລັບໄປແລ້ວ ທີ່ຮັບເອົາພຣະກິດຕິຄຸນຂອງພຣະເຢຊູຄຣິດຢູ່ໃນ ໂລກວິນຍານ (ຄພ 127–128).

**ລຳດັບປະຫວັດສາດ**

ເບິ່ງ ລຳດັບ ປະຫວັດສາດ ໃນພາກຫ້ອຍທ້າຍ.

**ວັນຂອງພຣະຜູ້ເປັນເຈົ້າ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ພິພາກສາ, ການພິພາກສາຄັ້ງສຸດທ້າຍ; ວັນຊະບາໂຕ

**ວັນຊະບາໂຕ.** *ເບິ່ງ* ສ້າງ, ການສ້າງ; ພັກຜ່ອນ *ນຳອີກ*

ວັນສັກສິດທີ່ຈັດຕັ້ງໄວ້ແຕ່ລະອາທິດເພື່ອໃຫ້ພັກຜ່ອນ ແລະ ນະມັດສະການ. ຫລັງຈາກພຣະ ເຈົ້າໄດ້ ເນລະ ມິດ ສ້າງທຸກສິ່ງທັງປວງ, ພຣະອົງໄດ້ພັກຜ່ອນໃນມື້ທີເຈັດ ແລະ ໄດ້ບັນຊາວ່າ ໃຫ້ຈັດມື້ໜຶ່ງໃນອາທິດໄວ້ ເປັນວັນພັກຜ່ອນ ເພື່ອຊ່ວຍຜູ້ຄົນໃຫ້ລະນຶກເຖິງພຣະອົງ (ອພຍ 20:8–11).

ກ່ອນການຟື້ນຄືນພຣະຊົນຂອງພຣະຄຣິດ, ສະມາຊິກຂອງສາດສະໜາຈັກໄດ້ຈັດວັນໜຶ່ງໃນທ້າຍອາທິດໄວ້ເປັນວັນຊະບາໂຕ, ເຊັ່ນດຽວກັບຊາວຢິວໄດ້ເຮັດ. ຫລັງຈາກການຟື້ນຄືນພຣະຊົນ, ສະມາຊິກຂອງສາດສະໜາຈັກ, ບໍ່ວ່າຊາວຢິວ ຫລື ຄົນຕ່າງຊາດ, ໄດ້ຈັດມື້ທຳອິດຂອງອາທິດເປັນ (ວັນພຣະຜູ້ເປັນເຈົ້າ) ເພື່ອລະນຶກເຖິງການຟື້ນຄືນພຣະຊົນຂອງພຣະຜູ້ເປັນເຈົ້າ. ທຸກວັນນີ້ ສາດສະໜາຈັກ ໄດ້ສືບຕໍ່ຈັດມື້ໜຶ່ງໃນອາທິດ ເປັນວັນຊະບາໂຕທີ່ສັກສິດ ຊຶ່ງໃນວັນນັ້ນ ເພື່ອຈະໄດ້ນະມັດສະການພຣະເຈົ້າ ແລະ ພັກຜ່ອນຈາກວຽກງານຂອງໂລກ.

ວັນຊະບາໂຕເຕືອນຜູ້ຄົນເຖິງຄວາມຈຳເປັນຂອງເຂົາສຳລັບການບຳລຸງລ້ຽງທາງວິນຍານ ແລະ ເຖິງໜ້າທີ່ຂອງເຂົາທີ່ຈະເຊື່ອຟັງພຣະເຈົ້າ. ເມື່ອປະຊາຊົນເລີ່ມບໍ່ເອົາໃຈໃສ່ໃນການ

ຮັກສາວັນຊະບາໂຕ, ທຸກມຸມຂອງຊີວິດ ຈະຖືກກະທົບກະເທືອນ ແລະ ຊີວິດທາງສາດສະໜາຈະເສື່ອມໂຊມ (ນມຢ 13:15–18; ຢມຢ 17:21–27).

ພຣະເຈົ້າໄດ້ຢຸດພັກກິດຈະການໃນມື້ທີເຈັດ, **ປຖກ** 2:1–3. ລູກຫລານຂອງອິດສະຣາເອນບໍ່ໄດ້ເກັບມານາໃນວັນຊະບາໂຕ, **ອພຍ** 16:22–30. ຈົ່ງຖືວັນຊະບາໂຕ ແລະ ຍຶດຖືໄວ້ເປັນວັນສັກສິດ, **ອພຍ** 20:8–11 (ມຊຢ 13:16–19). ວັນຊະບາໂຕໄດ້ຖືກມອບໃຫ້ເປັນເຄື່ອງໝາຍລະຫວ່າງພຣະເຈົ້າ ແລະ ມະນຸດ, **ອພຍ** 31:12–17 (ອຊກ 20:12, 20). ເຮົາບໍ່ຄວນຊື້ ຫລື ຂາຍສິ່ງຂອງໃນວັນຊະບາໂຕ, **ນມຢ** 10:31. ຈົ່ງເອີ້ນວັນຊະບາໂຕຊື່ນຊົມຍິນດີ, ໃຫ້ກຽດແກ່ພຣະຜູ້ເປັນເຈົ້າ ແລະ ບໍ່ເຫັນແກ່ຕົວ, **ອຊຢ** 58:13–14.

ວັນຊະບາໂຕໄດ້ຖືກຈັດຕັ້ງຂຶ້ນເພື່ອມະນຸດ ແລະ ບໍ່ແມ່ນມະນຸດເພື່ອວັນຊະບາໂຕ, **ມຣກ** 2:23–28. ບຸດມະນຸດແມ່ນພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕ, **ລກ** 6:1–10. ພຣະເຢຊູໄດ້ສອນຢູ່ໃນທຳມະສາລາ ແລະ ໄດ້ປິ່ນປົວໃນວັນຊະບາໂຕ, **ລກ** 13:10–14.

ຊາວນີໄຟໄດ້ຮັກສາວັນຊະບາໂຕໃຫ້ສັກສິດ, **ຈຣ** 1:5. ຕ້ອງຮັກສາວັນຊະບາໂຕໃຫ້ສັກສິດ, **ມຊຢ** 18:23.

ຈົ່ງຖວາຍສິນລະລຶກຂອງເຈົ້າໃນວັນສັກສິດຂອງເຮົາ, **ຄພ** 59:9–13. ຜູ້ອາໄສຂອງຊີໂອນຈະຕ້ອງຮັກສາວັນຊະບາໂຕ, **ຄພ** 68:29.

ເຮົາ, ພຣະເຈົ້າ, ໄດ້ພັກຜ່ອນໃນມື້ທີເຈັດຈາກວຽກງານຂອງເຮົາ, **ມຊ** 3:1–3 (ປຖກ 2:1–3; ອຣຮ 5:1–3).

**ວັນອາທິດ.** *ເບິ່ງ* ວັນຊະບາໂຕ

**ວິງວອນແທນ, ຜູ້ວິງວອນແທນ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ພຣະເຢຊູຄຣິດເປັນຜູ້ວິງວອນແທນເຮົານຳພຣະບິດາ (ມຣນ 7:28) ແລະ ອ້ອນວອນແກ້ຕາງເຮົານຳພຣະອົງ.

ພຣະເຢຊູຄຣິດເປັນຜູ້ວິງວອນແທນເຮົານຳພຣະບິດາ, **1 ຢຮ** 2:1 (ຄພ 110:4).

ພຣະເຢຊູຈະວິງວອນແທນມະນຸດທັງປວງ, **2 ນຟ** 2:9 (ຮຣ 7:25). ພຣະເຢຊູມີໄຊຊະນະເໜືອຄວາມຕາຍ, ປະທານອຳນາດໃຫ້ພຣະອົງ ເພື່ອວິງວອນແທນລູກຫລານມະນຸດ, **ມຊຢ** 15:8.

ເຮົາເປັນຜູ້ວິງວອນແທນພວກເຈົ້ານຳພຣະບິດາ, **ຄພ** 29:5. ພຣະເຢຊູຄຣິດເປັນຜູ້ອ້ອນວອນແກ້ຕາງເຈົ້າ, **ຄພ** 45:3–5.

**ວິດນີ, ນິວເອັນ ເຄ**

ຜູ້ນຳຄົນໜຶ່ງໃນສະໄໝເລີ່ມຕົ້ນຂອງສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່. ນິວເອັນ ເຄ ວິດນີ ໄດ້ເປັນອະທິການໃນເມືອງເຄີດແລນ, ລັດໂອໄຮໂອ (ສະຫະລັດອາເມຣິກາ), ແລະ ຕໍ່ມາໄດ້ຮັບໃຊ້ ເປັນອະທິການຜູ້ຄວບຄຸມຂອງສາດສະໜາຈັກ (ຄພ 72:1–8; 104; 117).

**ວິດເມີ, ຈອນ**

ຜູ້ນຳຄົນໜຶ່ງໃນສະໄໝເລີ່ມຕົ້ນ ຂອງສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່ ແລະ ເປັນຄົນໜຶ່ງໃນພະຍານແປດຄົນເຖິງພຣະຄຳພີມໍມອນ. ເບິ່ງ "ປະຈັກພະຍານຂອງພະຍານແປດຄົນ" ໃນໜ້າຄຳນຳຂອງພຣະຄຳພີມໍມອນ. ລາວຖືກເອີ້ນໃຫ້ສັ່ງສອນພຣະກິດຕິຄຸນນຳອີກ (ຄພ 30:9–11).

**ວິດເມີ, ເດວິດ**

ຜູ້ນຳຄົນໜຶ່ງໃນສະໄໝເລີ່ມຕົ້ນ ຂອງສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່ ແລະ ເປັນຄົນໜຶ່ງໃນພະຍານສາມຄົນ ຕໍ່ທີ່ມາ ແລະ ເຖິງຄວາມຈິງແທ້ຂອງພຣະຄຳພີມໍມອນ (ຄພ 14; 17–18). ພຣະຜູ້ເປັນເຈົ້າໄດ້ໃຫ້ຄຳແນະນຳສ່ວນຕົວຂອງພຣະອົງ ໃນ ຄຳສອນ ແລະ ພັນທະສັນຍາ 14 ແລະ 30:1–4.

**ວິດເມີ, ພີເຕີ, ຜູ້ລູກ**

ຜູ້ນຳຄົນໜຶ່ງໃນສະໄໝເລີ່ມຕົ້ນ ຂອງສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່ ແລະ ເປັນຄົນໜຶ່ງໃນພະຍານແປດຄົນເຖິງພຣະຄຳພີມໍມອນ. ເບິ່ງ "ປະຈັກພະຍານຂອງພະຍານ

ແປດຄົນ” ພຣະຜູ້ເປັນເຈົ້າໄດ້ໃຫ້ຄຳແນະນຳສ່ວນຕົວແກ່ລາວ ໃນ ຄຳສອນ ແລະ ພັນທະສັນຍາ 16 ແລະ 30:5–8.

**ວິທີທາງ.** *ເບິ່ງ* ເດີນ, ເດີນໄປກັບພຣະເຈົ້າ; ພຣະເຢຊູຄຣິດ *ນຳອີກ*

ທາງ ຫລື ວິທີທາງ ທີ່ບຸກຄົນຕິດຕາມ. ພຣະເຢຊູ ໄດ້ກ່າວວ່າ ພຣະອົງເປັນທາງນັ້ນ (ຢຮ 14:4–6).

ຈົ່ງຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າທີ່ຈະດຳເນີນຊີວິດຕາມທາງຂອງພຣະອົງ, **ພບຍ** 8:6. ຈົ່ງສັ່ງສອນລູກໃຫ້ຮູ້ທາງດຳເນີນຊີວິດ, **ສພສ** 22:6 (2 ນຟ 4:5). ພຣະຜູ້ເປັນເຈົ້າໄດ້ກ່າວວ່າ ວິທີທາງຂອງພຣະອົງແມ່ນສູງກວ່າວິທີທາງຂອງເຮົາ, **ອຊຢ** 55:8–9.

ປະຕູຄັບ ແລະ ທາງແຄບນັ້ນແຫລະທີ່ນຳໄປສູ່ຊີວິດ, **ມທ** 7:13–14 (3 ນຟ 14:13–14; 27:33; ຄພ 132:22, 25). ພຣະເຈົ້າຈະໃຫ້ເຈົ້າມີທາງຫລີກໜີຈາກການທົດລອງ, **1 ກຣທ** 10:13.

ພຣະຜູ້ເປັນເຈົ້າຈະບໍ່ໃຫ້ພຣະບັນຍັດ ນອກຈາກພຣະອົງຕຽມທາງໄວ້ສຳລັບລູກໆຂອງພຣະອົງທີ່ຈະຮັກສາ, **1 ນຟ** 3:7 (1 ນຟ 9:6; 17:3, 13). ບໍ່ມີຊ່ອງທາງໃດນອກຈາກປະຕູນັ້ນ, **2 ນຟ** 9:41. ທ່ານມີສິດທີ່ຈະເຮັດເພື່ອຕົນເອງ ທີ່ຈະເລືອກທາງແຫ່ງຄວາມຕາຍອັນເປັນນິດ ຫລື ທາງແຫ່ງຊີວິດນິລັນດອນ, **2 ນຟ** 10:23. ນີ້ຄືທາງນັ້ນ ແລະ ບໍ່ມີທາງ ຫລື ພຣະນາມອື່ນໃດ, **2 ນຟ** 31:21 (ມຊຢ 3:17; ແອວ 38:9; ຮລມ 5:9). ດ້ວຍຂອງປະທານຂອງພຣະບຸດຂອງພຣະອົງ, ພຣະເຈົ້າຈຶ່ງໄດ້ຕຽມທາງອັນປະເສີດທີ່ສຸດໃຫ້, **ອທ** 12:11 (1 ກຣທ 12:31).

ມະນຸດທຸກຄົນໄດ້ເດີນໄປໃນທາງຂອງຕົນເອງ, **ຄພ** 1:16. ມັນຈະຕ້ອງເປັນໄປຕາມວິທີທາງຂອງເຮົາເອງ, **ຄພ** 104:16.

**ວິໄນສາດສະໜາ.** *ເບິ່ງ* ໄຂ່ມຸກອັນລ້ຳຄ່າ; ຄຳສອນ ແລະ ພັນທະສັນຍາ; ພຣະຄຣິສຕະທຳຄຳພີ; ພຣະຄຳພີ; ພຣະຄຳພີມໍມອນ *ນຳອີກ*

ໜັງສືທີ່ສັກສິດຊຶ່ງຖືກຮັບຮູ້ ແລະ ເຊື່ອຖືໄດ້. ໃນສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ໜັງສືວິໄນສາດສະໜາຖືກເອີ້ນວ່າໜັງສືມາດຕະຖານ ແລະ ລວມທັງພຣະຄຳພີເດີມ ແລະ ພຣະຄຳພີໃໝ່, ພຣະຄຳພີມໍມອນ, ຄຳສອນ ແລະ ພັນທະສັນຍາ, ແລະໄຂ່ມຸກອັນລ້ຳຄ່າ.

**ວິນຍານ.** *ເບິ່ງ* ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ຄວາມຕາຍທາງຮ່າງກາຍ; ຈິດວິນຍານ; ມະນຸດ *ນຳອີກ*

ພາກສ່ວນນັ້ນຂອງການເປັນຢູ່ກ່ອນມາເກີດໃນໂລກມະຕະ, ໄດ້ມາຢູ່ໃນຮ່າງກາຍທີ່ມີເນື້ອໜັງ ໃນໄລຍະຊ່ວງມະຕະ, ແລະ ເປັນຢູ່ຫລັງຈາກຄວາມຕາຍ ຊຶ່ງເປັນຕົນຕົວຈົນເຖິງການຟື້ນຄືນຊີວິດ. ທຸກສິ່ງທີ່ມີຊີວິດຢູ່—ມະນຸດຊາດ, ສັດສາວາສິ່ງ, ແລະ ພືດພັນ—ເຄີຍເປັນວິນຍານ ກ່ອນຊີວິດໃດໆ ເກີດຂຶ້ນໃນໂລກນີ້ (ປຖກ 2:4–5; ມຊ 3:4–7). ຮ່າງກາຍທີ່ເປັນວິນຍານ ມີລັກສະນະທີ່ຄ້າຍຄືກັນກັບຮ່າງກາຍທີ່ມີເນື້ອໜັງ (1 ນຟ 11:11; ອທ 3:15–16; ຄພ 77:2; 129). ວິນຍານເປັນສານ, ແຕ່ມັນລະອຽດ ແລະ ບໍລິສຸດກວ່າ ວັດຖຸ ຫລື ສານທີ່ເປັນມະຕະໃດໆ (ຄພ 131:7).

ທຸກຄົນເປັນບຸດ ແລະ ທິດາແທ້ໆຂອງພຣະເຈົ້າ, ທີ່ໄດ້ເກີດເປັນວິນຍານນຳບິດາມານດານແຫ່ງສະຫວັນ ກ່ອນໄດ້ມາເກີດນຳພໍ່ແມ່ມະຕະຢູ່ໃນແຜ່ນດິນໂລກ (ຮຣ 12:9). ແຕ່ລະຄົນຢູ່ເທິງແຜ່ນດິນໂລກ ມີວິນຍານທີ່ເປັນອະມະຕະນອກເໜືອໄປຈາກຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ. ດັ່ງທີ່ບາງເທື່ອໄດ້ຖືກອະທິບາຍໃນພຣະຄຳພີ, ວິນຍານ ແລະ ຮ່າງກາຍ ທັງສອງຮ່ວມເຂົ້າເປັນຈິດວິນຍານ (ປຖກ 2:7; ຄພ 88:15; ມຊ 3:7, 9, 19; ອຣຮ 5:7). ວິນຍານສາມາດມີຊີວິດຢູ່ປາດສະຈາກຮ່າງກາຍ, ແຕ່ຮ່າງກາຍບໍ່ສາມາດມີຊີວິດຢູ່ປາດສະຈາກວິນຍານ (ຢກບ 2:26). ຄວາມຕາຍທາງຮ່າງກາຍ ເປັນການແຍກວິນຍານອອກຈາກຮ່າງກາຍ. ໃນການຟື້ນຄືນຊີວິດ, ວິນຍານຈະຮ່ວມເຂົ້າກັບຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກທີ່ມັນເຄີຍເປັນໃນຊ່ວງມະຕະ, ໂດຍມີຄວາມແຕກຕ່າງທີ່ສຳຄັນຢູ່ສອງຢ່າງ: ມັນຈະບໍ່ແຍກ

ອອກຈາກກັນອີກຈັກເທື່ອ, ແລະ ຮ່າງກາຍທີ່ເປັນເນື້ອໜັງ ຈະເປັນອະມະຕະ ແລະ ດີພ້ອມທຸກຢ່າງ (ແອວ 11:45; ຄພ 138:16–17).

ຜີບໍ່ມີເນື້ອໜັງ ບໍ່ມີກະດູກດັ່ງທີ່ພວກເຈົ້າເຫັນເຮົາມີຢູ່ນີ້, **ລກ** 24:39. ພຣະວິນຍານຂອງພຣະເຈົ້າເປັນພະຍານກັບວິນຍານຂອງພວກເຮົາປະກາດວ່າ ພວກເຮົາເປັນລູກຂອງພຣະເຈົ້າ, **ຣມ** 8:16. ຈົ່ງຖວາຍບາລະມີແດ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ, ແລະ ດ້ວຍວິນຍານຂອງຕົນ, **1 ກຣທ** 6:20.

ຮ່າງກາຍນີ້ ເປັນຮ່າງກາຍທາງວິນຍານຂອງເຮົາ, **ອທ** 3:16.

ມະນຸດເປັນວິນຍານ, **ຄພ** 93:33. ພຣະຄຣິດໄດ້ປະຕິບັດສາດສະໜາກິດແກ່ວິນຍານທີ່ຊອບທຳໃນທີ່ສຸຂະເສີມ, **ຄພ** 138:28–30 (1 ປຕ 3:18–19).

ພວກເຈົ້າໄດ້ເກີດໃນໂລກໂດຍນ້ຳ, ແລະ ໂລຫິດ, ແລະ ວິນຍານ, **ມຊ** 6:59. ພຣະອົງໄດ້ປະທັບຢືນຢູ່ໃນທ່າມກາງຄົນເຫລົ່ານັ້ນທີ່ເປັນວິນຍານ, **ອຣຮ** 3:23.

*ຜີມານຮ້າຍ:* ພຣະເຢຊູໄດ້ຂັບໄລ່ຜີມານຮ້າຍຫລາຍໂຕອອກໄປ, **ມຣກ** 1:27, 34, 39. ຜີຊົ່ວຮ້າຍອອກຈາກຊາຍຄົນນີ້ແມ, **ມຣກ** 5:2–13.

ວິນຍານຊົ່ວສອນມະນຸດວ່າບໍ່ຕ້ອງອະທິຖານ, **2 ນຟ** 32:8. ໃນພຣະນາມຂອງພຣະເຢຊູ ເພິ່ນໄດ້ຂັບໄລ່ພວກຜີສາງ ແລະ ວິນຍານອັນບໍ່ສະອາດອອກໄປ, **3 ນຟ** 7:19.

ວິນຍານເທັດຫລາຍດວງໄດ້ອອກໄປຫລອກລວງໂລກ, **ຄພ** 50:2, 31–32. ໂຈເຊັບ ສະມິດ ໄດ້ອະທິບາຍກ່ຽວກັບຂໍກະແຈທີ່ສຳຄັນສາມປະການ ໃນການພິຈາລະນາວ່າ ເປັນພຣະວິນຍານຂອງພຣະເຈົ້າ ຫລື ວ່າເປັນຂອງມານ, **ຄພ** 129.

**ວິນຍານຊົ່ວ.** *ເບິ່ງ* ວິນຍານ—ຜີມານຮ້າຍ

**ວິນຍານທີ່ສຳນຶກຜິດ.** *ເບິ່ງ* ຫົວໃຈທີ່ຊອກຊ້ຳ

**ວິວລຽມສ໌, ເຟຣ໌ເດຣິກ ຈີ**

ຜູ້ນຳຄົນໜຶ່ງລຸ້ນທຳອິດໃນສາດສະໜາຈັກທີ່ໄດ້ຖືກຟື້ນຟູຄືນມາໃໝ່ ຜູ້ໄດ້ຮັບໃຊ້ຊົ່ວໄລຍະໜຶ່ງ ເປັນທີ່ປຶກສາໃນຝ່າຍປະທານຂອງຖານະປະໂລຫິດສູງ (ຄພ 81; 90:6, 19; 102:3).

**ວູດຣັບ, ວິວເຝີດ.** *ເບິ່ງ* ຂໍ້ປະກາດຢ່າງເປັນທາງການ 1; ຄຳຖະແຫລງນະໂຍບາຍ *ນຳອີກ*

ປະທານຄົນທີສີ່ຂອງສາດສະໜາຈັກ ຫລັງຈາກພຣະກິດຕິຄຸນໄດ້ຖືກຟື້ນຟູຄືນມາໃໝ່ຜ່ານສາດສະດາໂຈເຊັບ ສະມິດ. ເພິ່ນໄດ້ເກີດໃນປີ 1807 ແລະ ໄດ້ເສຍຊີວິດ ໃນປີ 1898.

ໄດ້ຖືກເອີ້ນໃຫ້ຮັບຕຳແໜ່ງໃນສະພາອັກຄະສາວົກສິບສອງ, **ຄພ** 118:6. ໄດ້ຢູ່ໃນບັນດາວິນຍານທີ່ຖືກເລືອກໄວ້ ຜູ້ທີ່ໄດ້ຖືກຮັກສາໄວ້ເພື່ອໃຫ້ອອກມາໃນຄວາມສົມບູນແຫ່ງເວລາ, **ຄພ** 138:53. ໄດ້ຮັບການເປີດເຜີຍ ເພື່ອໃຫ້ຢຸດການມີເມຍຫລາຍຄົນ ຢູ່ໃນສາດສະໜາຈັກ, **ຂປ** 1.

**ວຽກງານ**

ການກະທຳຂອງບຸກຄົນ, ບໍ່ວ່າດີ ຫລື ຊົ່ວ. ແຕ່ລະຄົນຈະຖືກພິພາກສາຕາມວຽກງານຂອງຕົນ.

ພຣະຜູ້ເປັນເຈົ້າຈະຕອບແທນທຸກຄົນຕາມວຽກງານຂອງເຂົາ, **ສພສ** 24:12.

ຈົ່ງໃຫ້ແສງສະຫວ່າງທີ່ຢູ່ໃນພວກເຈົ້ານັ້ນສ່ອງແຈ້ງຕໍ່ໜ້າຄົນທັງຫລາຍ, ເພື່ອວ່າພວກເຂົາຈະໄດ້ເຫັນຄຸນງາມຄວາມດີຂອງພວກເຈົ້າ, **ມທ** 5:16 (3 ນຟ 12:16). ຜູ້ທີ່ປະຕິບັດຕາມນ້ຳພຣະໄທຂອງພຣະບິດາຂອງເຮົາ ຈະໄດ້ເຂົ້າໄປໃນອານາຈັກສະຫວັນ, **ມທ** 7:21. ຄວາມເຊື່ອ ຖ້າບໍ່ມີການປະຕິບັດກໍຕາຍແລ້ວ, **ຢກບ** 2:14–26.

ພວກເຂົາຈະຖືກພິພາກສາຕາມການກະທຳຂອງພວກເຂົາ, **1 ນຟ** 15:32 (ມຊຍ 3:24). ພວກເຮົາຮູ້ວ່າ ຫລັງຈາກພວກເຮົາເຮັດທຸກຢ່າງໄດ້ແລ້ວ ໂດຍພຣະຄຸນພວກເຮົາຈຶ່ງລອດ, **2 ນຟ** 25:23. ຈົ່ງສິດສອນພວກເຂົາບໍ່ໃຫ້ເບື່ອໜ່າຍວຽກງານດີ, **ແອວ** 37:34. ມັນຈຳເປັນທີ່ມະນຸດຈະຖືກພິພາກສາຕາມວຽກງານຂອງ

ພວກເຂົາ, **ແອວ** 41:3. ໂດຍວຽກງານຂອງເຂົາ ທ່ານຈະຮູ້ຈັກເຂົາ, **ມຣນ** 7:5 (ຄພ 18:38).

ເຮົາ, ພຣະຜູ້ເປັນເຈົ້າ, ຈະພິພາກສາມະນຸດທັງປວງຕາມວຽກງານຂອງພວກເຂົາ, **ຄພ** 137:9.

**ວຽກງານເຜີຍແຜ່.** *ເບິ່ງ* ສັ່ງສອນ; ພຣະກິດຕິຄຸນ *ນຳອີກ*

ເພື່ອແບ່ງປັນພຣະກິດຕິຄຸນຂອງພຣະເຢຊູຄຣິດ ໂດຍຖ້ອຍຄຳ ແລະ ໂດຍຕົວຢ່າງ.

ເປັນຕາຮັກແທ້ທີ່ເຫັນຜູ້ສົ່ງຂ່າວຂ້າມພູມາໂດຍນຳຂ່າວດີຄືຂ່າວແຫ່ງສັນຕິສຸກມາໃຫ້, **ອຊຢ** 52:7. ເຮົາຈະຊອກຫາ ແລະ ນຳຫາແກະຂອງເຮົາ, **ອຊກ** 34:11.

ຈົ່ງໄປທົ່ວໂລກປະກາດຂ່າວປະເສີດແກ່ມະນຸດສະໂລກທັງໝົດ, **ມຣກ** 16:15 (ມມ 9:22). ທົ່ງກໍຂາວພ້ອມແລ້ວທີ່ຈະເກັບກ່ຽວ, **ຢຮ** 4:35. ຖ້າບໍ່ມີຜູ້ໃດໃຊ້ພວກເຂົາໄປ ພວກເຂົາຈະໄປປະກາດໄດ້ຢ່າງໃດ, **ຣມ** 10:15.

ຈົ່ງສອນພຣະຄຳຂອງພຣະເຈົ້າໃຫ້ພວກເຂົາດ້ວຍຄວາມພາກພຽນຢ່າງເຕັມທີ່, **ຢຄ** 1:19. ພຣະຜູ້ເປັນເຈົ້າໄດ້ປະທານໃຫ້ທຸກປະຊາຊາດເພື່ອສອນພຣະຄຳຂອງພຣະອົງ, **ແອວ** 29:8.

ພຣະກິດຕິຄຸນຈະຖືກປ່າວປະກາດໂດຍຄົນທີ່ອ່ອນແອ ແລະ ຄົນທີ່ຕ່ຳຕ້ອຍ, **ຄພ** 1:23. ວຽກງານອັນໜ້າອັດສະຈັນພວມຈະອອກມາ, **ຄພ** 4:1. ຖ້າຫາກພວກເຈົ້າອອກແຮງຕະຫລອດວັນເວລາຂອງພວກເຈົ້າ ແລະ ນຳຈິດວິນຍານດວງໜຶ່ງມາຫາເຮົາ, ຄວາມຊື່ນຊົມຂອງພວກເຈົ້າຈະຍິ່ງໃຫຍ່ພຽງໃດ, **ຄພ** 18:15. ຜູ້ທີ່ຖືກເລືອກໄວ້ຂອງເຮົາໄດ້ຍິນສຽງຂອງເຮົາ ແລະ ບໍ່ເຮັດໃຈແຂງກະດ້າງ, **ຄພ** 29:7. ຈົ່ງອອກໄປສັ່ງສອນພຣະກິດຕິຄຸນຂອງເຮົາ, ເປັນຄູ່ໆ, **ຄພ** 42:6. ສຽງຈະຕ້ອງອອກໄປຈາກບ່ອນນີ້, **ຄພ** 58:64. ຈົ່ງເປີດປາກຂອງພວກເຈົ້າເພື່ອປະກາດພຣະກິດຕິຄຸນຂອງເຮົາ, **ຄພ** 71:1. ປະກາດຄວາມຈິງອີງຕາມການເປີດເຜີຍ ແລະ ພຣະບັນຍັດ, **ຄພ** 75:4. ທຸກຄົນຜູ້ໄດ້ຖືກເຕືອນ ຄວນເຕືອນເພື່ອນບ້ານຂອງຕົນ, **ຄພ** 88:81 (ຄພ 38:40–41). ພຣະຜູ້ເປັນເຈົ້າຈະຈັດຫາໃຫ້ຄອບຄົວຂອງຜູ້ທີ່ສັ່ງສອນພຣະກິດຕິຄຸນ, **ຄພ** 118:3. ຜູ້ຮັບໃຊ້ຂອງພຣະເຈົ້າຈະອອກໄປ, **ຄພ** 133:38. ພວກແອວເດີທີ່ຊື່ສັດ, ເມື່ອເຂົາເຈົ້າອອກໄປຈາກຊີວິດມະຕະ, ໄດ້ສືບຕໍ່ວຽກງານຂອງເຂົາເຈົ້າ, **ຄພ** 138:57.

**ເວົ້າຈາບໍ່ດີ.** *ເບິ່ງ* ຂັດແຍ້ງ, ການຂັດແຍ້ງ; ຂ່າວລື; ຕົວະ; ນິນທາ *ນຳອີກ*

ການກ່າວສິ່ງທີ່ຜິດ, ເຈັບປວດ, ແລະ ຊົ່ວຮ້າຍ. ສ່ວນຫລາຍແລ້ວໃນພຣະຄຳພີ ການເວົ້າຈາເຊັ່ນນັ້ນແມ່ນເຈາະຈົງໃສ່ຜູ້ໃດຜູ້ໜຶ່ງດ້ວຍຈຸດປະສົງທີ່ຈະໃຫ້ມີຄວາມເຈັບປວດ.

ຈົ່ງລະເວັ້ນຈາກການເວົ້າຊົ່ວຊ້ານາໆ, **ພສສ** 34:13 (1 ປຕ 3:10). ຄົນອະທຳແຈກຈ່າຍແນວບໍ່ດີ, **ສພສ** 16:27.

ເມື່ອຄົນເວົ້າຄວາມຊົ່ວອັນບໍ່ຈິງທຸກຢ່າງຕໍ່ສູ້ເຈົ້າທັງຫລາຍ ພວກເຈົ້າກໍເປັນສຸກ, **ມທ** 5:11 (3 ນຟ 12:11). ສິ່ງທີ່ອອກມາຈາກປາກກໍອອກມາຈາກໃຈ, **ມທ** 15:19 (ມຣກ 7:21). ຢ່າກ່າວຄຳຊົ່ວຮ້າຍຕໍ່ຜູ້ປົກຄອງ, **ກຈກ** 23:5. ການກ່າວສຽດສີກັນກໍຢ່າໃຫ້ມີ, **ອຟຊ** 4:31. ຢ່າເວົ້ານິນທາຊຶ່ງກັນແລະກັນ, **ຢກບ** 4:11.

ຈົ່ງເບິ່ງວ່າບໍ່ໃຫ້ມີການເວົ້າລັບຫລັງ, ຫລືເວົ້າຈາບໍ່ດີ, **ຄພ** 20:54.

**ເວົ້າລັບຫລັງ.** *ເບິ່ງ* ເວົ້າຈາບໍ່ດີ

**ໄວ້ວາງໃຈ, ຄວາມໄວ້ວາງໃຈ.** *ເບິ່ງ* ສັດທາ; ໝັ້ນໃຈ, ຄວາມໝັ້ນໃຈ *ນຳອີກ*

ການເພິ່ງອາໄສ ຫລື ການມີຄວາມເຊື່ອໝັ້ນໃນຕົວຂອງບາງຄົນ ຫລື ໃນບາງສິ່ງ. ໃນເລື່ອງທາງວິນຍານ, ຄວາມໄວ້ວາງໃຈ ແມ່ນລວມທັງການເພິ່ງອາໄສພຣະເຈົ້າ ແລະ ພຣະວິນຍານຂອງພຣະອົງ.

ເຖິງແມ່ນພຣະອົງຈະຂ້າຂ້ານ້ອຍ, ແຕ່ຂ້ານ້ອຍຈະໄວ້ວາງໃຈໃນພຣະອົງ, **ໂຢບ** 13:15. ຈົ່ງໄວ້ວາງໃຈໃນພຣະຜູ້ເປັນເຈົ້າ ດ້ວຍສຸດໃຈຂອງເຈົ້າ, **ສພສ** 3:5. ພຣະເຈົ້າໄດ້ປົດປ່ອຍຜູ້ຮັບໃຊ້ຂອງພຣະອົງທີ່ໄວ້ວາງໃຈໃນພຣະອົງ, **ດນອ** 3:19–28.

ຂ້າ ນ້ອຍ ຈະ ໄວ້ ວາງ ໃຈ ໃນ ພຣະ ອົງ ຕະຫລອດໄປ, **2 ນຟ** 4:34. ຈົ່ງປິຕິຍິນດີ ແລະ ໝັ້ນໃຈໃນພຣະເຈົ້າ, **ມຊຍ** 7:19. ຜູ້ໃດກໍຕາມທີ່ໄວ້ວາງໃຈໃນພຣະເຈົ້າ ຈະຖືກຍົກຂຶ້ນໃນວັນສຸດທ້າຍ, **ມຊຍ** 23:22. ຜູ້ໃດກໍຕາມທີ່ໄວ້ວາງໃຈໃນພຣະເຈົ້າ ຜູ້ນັ້ນຈະໄດ້ຮັບການອູ້ມຊູໃນເວລາຂັດສົນຂອງພວກເຂົາ, **ແອວ** 36:3, 27.

ຢ່າໄວ້ວາງໃຈໃນແຂນແຫ່ງເນື້ອໜັງ, **ຄພ** 1:19. ຈົ່ງໄວ້ວາງໃຈໃນພຣະວິນຍານນັ້ນ ຊຶ່ງພາໃຫ້ເຮັດຄວາມດີ, **ຄພ** 11:12. ໃຫ້ເຂົາໄວ້ວາງໃຈໃນເຮົາ ແລະ ເຂົາຈະບໍ່ຖືກເຮັດໃຫ້ສັບສົນ, **ຄພ** 84:116.

**ຫີນ.** *ເບິ່ງ* ເປີດເຜີຍ, ການເປີດເຜີຍ; ພຣະກິດຕິຄຸນ; ພຣະເຢຊູຄຣິດ *ນຳອີກ*

ເປັນຄຳອຸປະມາ ໝາຍເຖິງພຣະເຢຊູຄຣິດ ແລະ ພຣະກິດຕິຄຸນຂອງພຣະອົງ, ຊຶ່ງເປັນຮາກຖານ ແລະ ສິ່ງຄ້ຳຈູນທີ່ເຂັ້ມແຂງ (ຄພ 11:24; 33:12–13). ຄຳວ່າຫີນ ຍັງໝາຍເຖິງການເປີດເຜີຍນຳອີກ, ຊຶ່ງໂດຍທາງນີ້ ພຣະເຈົ້າໄດ້ເຮັດໃຫ້ພຣະກິດຕິຄຸນເປັນທີ່ຮູ້ຈັກແກ່ມວນມະນຸດ (ມທ 16:15–18).

ພຣະອົງເປັນທີ່ເພິ່ງ, ສົມບູນ ແລະ ທ່ຽງທຳ, **ພບຍ** 32:4. ພຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງຂ້ານ້ອຍ; ຂ້ານ້ອຍຈະໄວ້ວາງໃຈໃນພຣະອົງ, **2 ຊມອ** 22:2–3. ມີຫີນໃຫຍ່ກ້ອນໜຶ່ງແຕກອອກມາເອງຈາກໜ້າຜາໂດຍບໍ່ມີຜູ້ໃດເຮັດ, **ດນອ** 2:34–35.

ມັນຖືກສ້າງຂຶ້ນຢູ່ເທິງດານຫີນ, **ມທ** 7:25 (3 ນຟ 14:25). ພຣະເຢຊູຄຣິດເປັນຫີນ ທີ່ຖືວ່າບໍ່ມີຄຸນຄ່າຫຍັງ, **ກຈກ** 4:10–11. ສີລາສັກສິດນັ້ນ ກໍຄືພຣະຄຣິດນັ້ນເອງ, **1 ກຣທ** 10:1–4 (ອພຍ 17:6).

ຄົນທີ່ຖືກສ້າງຂຶ້ນເທິງດານຫີນຍ່ອມໄດ້ຮັບຄວາມຈິງ, **2 ນຟ** 28:28. ຊາວຢິວຈະບໍ່ຍອມຮັບຫີນ [ພຣະຄຣິດ] ຊຶ່ງຢູ່ເທິງນັ້ນພວກເຂົາຈະໄດ້ສ້າງ, **ຢຄ** 4:15–17. ຈະຕ້ອງສ້າງຮາກຖານຂອງພວກເຮົາເທິງດານຫີນຂອງພຣະຜູ້ໄຖ່ຂອງພວກເຮົາ, **ຮລມ** 5:12. ຜູ້ໃດກໍຕາມທີ່ສ້າງຢູ່ເທິງຄຳສອນຂອງພຣະຄຣິດ ໄດ້ສ້າງຢູ່ເທິງດານຫີນຂອງພຣະອົງ ແລະ ຈະບໍ່ເພພັງເມື່ອນ້ຳມາຖ້ວມ, **3 ນຟ** 11:39–40 (ມທ 7:24–27; 3 ນຟ 18:12–13). ຄົນສະຫລາດປຸກເຮືອນຂອງຕົນໃສ່ເທິງດານຫີນ, **3 ນຟ** 14:24.

ຖ້າຫາກເຈົ້າຖືກສ້າງຂຶ້ນເທິງດານຫີນຂອງເຮົາ, ແຜ່ນດິນໂລກ ແລະ ນະລົກຈະເອົາຊະນະບໍ່ໄດ້, **ຄພ** 6:34. ຄົນທີ່ສ້າງຢູ່ເທິງຫີນສີລານີ້ ຈະບໍ່ຕົກ, **ຄພ** 50:44.

ເຮົາຄືພຣະເມຊີອາ, ກະສັດແຫ່ງຊີໂອນ, ສີລາຂອງສະຫວັນ, **ມຊ** 7:53.

**ຫີນເສົາເອກ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ຫີນສຳຄັນທີ່ວາງໄວ້ແຈຂອງພື້ນຖານຂອງຕຶກ. ພຣະເຢຊູຄຣິດຖືກເອີ້ນວ່າ ຫີນເສົາເອກ (ອຟຊ 2:20).

ຫີນທີ່ຊ່າງກໍ່ໄດ້ໂຍນຖິ້ມແລ້ວໄດ້ກາຍເປັນຫີນເສົາເອກ, **ພສສ** 118:22 (ມທ 21:42–44; ມຣກ 12:10; ລກ 20:17; ກຈກ 4:10–12).

ຊາວຢິວໄດ້ປະຕິເສດຫີນເສົາເອກ, **ຢຄ** 4:15–17.

**ຫີບຄຳໝັ້ນສັນຍາ.** *ເບິ່ງ* ສະຖານທີ່ນະມັດສະການ *ນຳອີກ*

ຮູ້ຈັກກັນອີກວ່າເປັນຫີບຂອງພຣະເຢໂຮວາ ແລະ ຫີບປະຈັກພະຍານ, ຫີບຄຳໝັ້ນສັນຍາເປັນຫີບສີ່ຫລ່ຽມຄືໜ້າປຶ້ມ ຫລື ເປັນກ່ອງທີ່ເຮັດດ້ວຍໄມ້ ແລະ ໂອບດ້ວຍຄຳ. ມັນເປັນເຄື່ອງໝາຍທາງສາດສະໜາທີ່ເກົ່າແກ່ ແລະ ສັກສິດທີ່ສຸດຂອງຊາວອິດສະຣາເອນ. ຝາອັດຫີບຖືກນັບຖືວ່າເປັນພຣະທີ່ນັ່ງຂອງພຣະເຢໂຮວາຢູ່ເທິງແຜ່ນດິນໂລກ (ອພຍ 25:22). ຫລັງຈາກສະຖານທີ່ນະມັດສະການໄດ້ຖືກສ້າງສຳເລັດແລ້ວ, ຫີບນັ້ນໄດ້ຖືກເກັບໄວ້ຢູ່ໃນບ່ອນສັກສິດທີ່ສຸດ (1 ກສ 8:1–8).

ໂມເຊໄດ້ເຮັດຫີບຕາມທີ່ພຣະເຈົ້າບັນຊາ, **ອພຍ** 25. ລູກຫລານຂອງເລວີໄດ້ຖືກບັນຊາໃຫ້ຮັກສາຫີບ, **ຈບຊ** 3:15, 31. ຫີບຄຳໝັ້ນສັນຍາໄດ້ນຳໜ້າພວກເຂົາ, **ຈບຊ** 10:33. ຈົ່ງເອົາປຶ້ມນີ້ທີ່ບັນຈຸບັນຍັດຂອງພຣະເຈົ້າ ໄປໄວ້ໃນຫີບຄຳໝັ້ນສັນຍາ, **ພບຍ** 31:24–26. ແມ່

ນ້ຳຈໍແດນໄດ້ຢຸດໂຮມກັນຢູ່ຕໍ່ໜ້າຫີບຄຳໝັ້ນສັນຍາ, **ຢຊ** 3:13–17; 4:1–7. ພວກປະໂລຫິດໄດ້ຫາມຫີບຄຳໝັ້ນສັນຍາໄປຍຶດເອົາເມືອງເຢຣິໂກ, **ຢຊ** 6:6–20. ຊາວຟີລິດສະຕິນໄດ້ຍຶດເອົາຫີບຂອງພຣະເຈົ້າ, **1 ຊມອ** 5. ພຣະຜູ້ເປັນເຈົ້າໄດ້ອວຍພອນໂອເບັດໂອໂດມເນື່ອງດ້ວຍຫີບຂອງພຣະເຈົ້າ, **2 ຊມອ** 6:11–12. ອຸດສາໄດ້ຖືກພຣະຜູ້ເປັນເຈົ້າຂ້າຕາຍເມື່ອລາວບໍ່ເຊື່ອຟັງ ໂດຍການຍື່ນມືໄປຈັບຫີບ, **1 ຂຄ** 13:9–12 (ຄພ 85:8). ຈົ່ງສ້າງພຣະວິຫານຂອງອົງພຣະຜູ້ເປັນເຈົ້າ, ເພື່ອບັນຈຸຫີບຄຳໝັ້ນສັນຍາໄວ້ໃນນັ້ນ, **1 ຂຄ** 22:19.

ສ່ວນປະກອບຂອງຫີບຄຳໝັ້ນສັນຍາໄດ້ຖືກອະທິບາຍໄວ້, **ຮຣ** 9:4.

**ຫຶງຫວງ, ຄວາມຫຶງຫວງ.** *ເບິ່ງ* ອິດສາ *ນຳອີກ*

ດັ່ງທີ່ໃຊ້ໃນພຣະຄຳພີ, ຄຳວ່າ ຫຶງຫວງ ມີຄວາມໝາຍຢູ່ສອງຢ່າງ: (1) ທີ່ມີຄວາມຮູ້ສຶກອັນແຮງກ້າ ແລະ ເລິກຊຶ້ງກ່ຽວກັບບາງຄົນ ຫລື ບາງສິ່ງ, ແລະ (2) ທີ່ມີຄວາມອິດສາຕໍ່ບາງຄົນ ຫລື ຄວາມສົງໄສວ່າຄົນອື່ນຈະດີກວ່າຕົນ.

*ການມີຄວາມຮູ້ສຶກອັນແຮງກ້າ:* ເຮົາເປັນພຣະເຈົ້າທີ່ຫວງແຫນ, **ອພຍ** 20:5 (ພບຍ 5:9; 6:15; ມຊຢ 11:22). ເຮົາຈະປົກປັກຮັກສານາມອັນສັກສິດຂອງເຮົາ, **ອຊກ** 39:25. ເຮົາມີຄວາມຮັກ ແລະ ຄວາມຫ່ວງໃຍຕໍ່ກຸງເຢຣູຊາເລັມ ແລະ ຕໍ່ຊີໂອນ, **ຊກຢ** 1:14.

*ການມີຄວາມອິດສາ ຫລື ສົງໄສ:* ຜົວເກີດໂມໂຫຂຶ້ນຍ້ອນຫຶງຫວງເມຍ, **ສພສ** 6:32–35.

ເອຄິດເລີ່ມມີຄວາມອິດສາບັງບຽດລູກຊາຍຄົນໜຶ່ງຂອງຕົນ, **ອທ** 9:7.

ຈົ່ງປົດເປື້ອງຄວາມອິດສາບັງບຽດ ແລະ ຄວາມຢ້ານກົວອອກຈາກຕົນ, **ຄພ** 67:10.

**ຫູ, ພຣະກັນ.** *ເບິ່ງ* ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ *ນຳອີກ*

ໃນພຣະຄຳພີ, ຫູມັກຖືກໃຊ້ເລື້ອຍໆເປັນເຄື່ອງໝາຍເຖິງຄວາມສາມາດຂອງບຸກຄົນທີ່ຈະຟັງ ແລະ ເຂົ້າໃຈ ເລື່ອງທີ່ເປັນຂອງພຣະເຈົ້າ.

ພວກເຂົາມີຫູ ແຕ່ພັດຟັງບໍ່ໄດ້ຍິນຫຍັງ, **ພສສ** 115:6. ພຣະຜູ້ເປັນເຈົ້າໄດ້ໃຫ້ຂ້ອຍຟັງ, **ອຊຢ** 50:4–5 (2 ນຟ 7:4–5).

ຜູ້ໃດມີຫູຟັງຈົ່ງຟັງເອົາ, **ມທ** 11:15. ຫູຂອງເຂົາໜັກ, **ມທ** 13:15 (ມຊ 6:27). ສິ່ງທີ່ຕາບໍ່ເຫັນ ຫູບໍ່ໄດ້ຍິນ ແມ່ນສິ່ງນັ້ນທີ່ພຣະເຈົ້າໄດ້ຈັດຕຽມໄວ້, **1 ກຣທ** 2:9 (ຄພ 76:10).

ມານສີ່ມໃສ່ຫູຂອງພວກນີ້, **2 ນຟ** 28:22. ຈົ່ງເປີດຫູຂອງພວກທ່ານເພື່ອວ່າພວກທ່ານຈະໄດ້ຍິນ, **ມຊຢ** 2:9 (3 ນຟ 11:5). ຂ້າພະເຈົ້າຖືກຮຽກຮ້ອງຫລາຍເທື່ອ, ແລະ ຂ້າພະເຈົ້າບໍ່ຍອມຟັງ, **ແອວ** 10:6. ຈົ່ງຟັງຄຳເວົ້າຂອງພໍ່, **ແອວ** 36:1 (ແອວ 38:1; ຄພ 58:1).

ທັງບໍ່ມີຫູໃດທີ່ຈະບໍ່ໄດ້ຍິນ, **ຄພ** 1:2. ຫູຂອງເຂົາຈະຖືກເປີດຜ່ານຄວາມຖ່ອມຕົວ ແລະ ການອະທິຖານ, **ຄພ** 136:32.

**ເຫັນຊອບນຳກັນ.** *ເບິ່ງ* ການສະໜັບສະໜູນຜູ້ນຳຂອງສາດສະໜາຈັກ; ສາດສະໜາຈັກຂອງພຣະເຢຊູຄຣິດ *ນຳອີກ*

ໂດຍຫລັກທຳນີ້ ສະມາຊິກຂອງສາດສະໜາຈັກສະໜັບສະໜູນຜູ້ທີ່ໄດ້ຖືກແຕ່ງຕັ້ງຕໍ່ການເອີ້ນເພື່ອໃຫ້ຮັບໃຊ້ຢູ່ໃນສາດສະໜາຈັກ, ເຊັ່ນດຽວກັບການຕັດສິນໃຈໃດໆຂອງສາດສະໜາຈັກທີ່ຮຽກຮ້ອງການສະໜັບສະໜູນ, ຕາມປົກກະຕິແລ້ວຈະສະແດງໂດຍການຍົກມືຂວາຂຶ້ນ.

ພຣະເຢຊູຄຣິດປະທັບຢູ່ເປັນປະມຸກຂອງສາດສະໜາຈັກຂອງພຣະອົງ. ຜ່ານການດົນໃຈຂອງພຣະວິນຍານບໍລິສຸດ, ພຣະອົງຊີ້ນຳຜູ້ນຳຂອງສາດສະໜາຈັກໃນການກະທຳ ແລະ ການຕັດສິນໃຈອັນສຳຄັນ. ເຖິງຢ່າງໃດກໍຕາມ, ສະມາຊິກທຸກຄົນຂອງສາດສະໜາຈັກມີສິດ ແລະ ສິດທິພິເສດເລື່ອງການສະໜັບສະໜູນ ຫລື ບໍ່ສະໜັບສະໜູນການກະທຳ ແລະ ການຕັດສິນໃຈຂອງຜູ້ນຳຂອງເຂົາເຈົ້າ.

ປະຊາຊົນທຸກຄົນໄດ້ຕອບພ້ອມກັນ, **ອພຍ** 24:3 (ຈບຊ 27:18–19).

ອັກຄະສາວົກ ແລະ ພວກແອວເດີໄດ້ມາປະຊຸມຕົກລົງກັນ, **ກຈກ** 15:25.

ບໍ່ມີໃຜຈະໄດ້ຮັບການແຕ່ງຕັ້ງ ປາດສະ

ຈາກການອອກສຽງຂອງສາດສະໜາຈັກ, **ຄພ** 20:65–66. ທຸກສິ່ງຈະຕ້ອງເປັນໄປດ້ວຍການເຫັນຊອບນຳກັນ, **ຄພ** 26:2 (ຄພ 28:13). ໃຫ້ທຸກສິ່ງທັງປວງເປັນໄປຕາມຄວາມເຫັນພ້ອມນຳກັນ, **ຄພ** 104:21.

**ຫົວໃຈທີ່ຊອກຊ້ຳ.** *ເບິ່ງ* ກັບໃຈ, ການກັບໃຈ; ໃຈ; ເສຍສະລະ, ການເສຍສະລະ; ຖ່ອມຕົນ, ຄວາມຖ່ອມຕົນ; ອ່ອນໂຍນ, ຄວາມອ່ອນໂຍນ *ນຳອີກ*

ການມີໃຈທີ່ຊອກຊ້ຳເປັນການຖ່ອມຕົວ, ສຳນຶກຜິດ, ເປັນຄົນທີ່ກັບໃຈ, ແລະ ອ່ອນໂຍນ—ນັ້ນຄື, ຍອມຕໍ່ພຣະປະສົງຂອງພຣະເຈົ້າ.

ເຮົາຢູ່ນຳເຂົາຜູ້ທີ່ຖ່ອມໃຈ ແລະ ກັບໃຈໃໝ່, **ອຊຢ** 57:15.

ພຣະຄຣິດໄດ້ຖວາຍພຣະອົງເອງ ເພື່ອຜູ້ມີໃຈທີ່ຊອກຊ້ຳ ແລະ ມີວິນຍານທີ່ສຳນຶກຜິດ, **2 ນຟ** 2:7. ໃຫ້ຖວາຍໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດແດ່ພຣະຜູ້ເປັນເຈົ້າ, **3 ນຟ** 9:20 (ຄພ 59:8). ພຽງແຕ່ຜູ້ມີໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດເທົ່ານັ້ນທີ່ໄດ້ຖືກຮັບເຂົ້າສູ່ບັບຕິສະມາ, **ມຣນ** 6:2.

ພຣະເຢຊູໄດ້ຖືກຄຶງເພື່ອການປົດບາບໃຫ້ໃຈທີ່ສຳນຶກຜິດ, **ຄພ** 21:9. ພຣະອົງຈະຮັບເອົາຜູ້ມີວິນຍານທີ່ສຳນຶກຜິດ, **ຄພ** 52:15. ພຣະວິນຍານສັກສິດຖືກສັນຍາໃຫ້ແກ່ຜູ້ທີ່ສຳນຶກຜິດ, **ຄພ** 55:3. ວິນຍານຂອງເຮົາໄດ້ຖືກສົ່ງອອກໄປເພື່ອໃຫ້ຄວາມສະຫວ່າງແກ່ຄົນຖ່ອມຕົວ ແລະ ສຳນຶກຜິດ, **ຄພ** 136:33.

**ໃຫ້ກຽດ.** *ເບິ່ງ* ຄາລະວະ, ຄວາມຄາລະວະ; ນັບຖື *ນຳອີກ*

ດັ່ງທີ່ໃຊ້ໃນພຣະຄຳພີເປັນປົກກະຕິ, ເປັນການສະແດງຄວາມນັບຖື ແລະ ຄວາມຄາລະວະຕໍ່ບາງຄົນ ຫລື ບາງສິ່ງ.

ຈົ່ງນັບຖືພໍ່ແມ່ຂອງເຈົ້າ, **ອພຍ** 20:12 (1 ນຟ 17:55; ມຊຢ 13:20). ຈົ່ງຍົກຍໍໃຫ້ກຽດພຣະຜູ້ເປັນເຈົ້າດ້ວຍຜົນລະປູກອັນດີທີ່ສຸດຈາກດິນແດນຂອງເຈົ້າ, **ສພສ** 3:9.

ຖ້າຜູ້ໃດບົວລະບັດຮັບໃຊ້ເຮົາ, ພຣະບິດາຂອງເຮົາກໍຈະໃຫ້ກຽດແກ່ຜູ້ນັ້ນ, **ຢຮ** 12:26. ຜູ້ເປັນຜົວຕ້ອງນັບຖືເມຍຂອງຕົນ, **1 ປຕ** 3:7.

ພວກເຂົາໃຫ້ກຽດແກ່ພຣະຜູ້ເປັນເຈົ້າດ້ວຍຮິມສົບຂອງເຂົາເທົ່ານັ້ນ, **2 ນຟ** 27:25 (ອຊຢ 29:13). ຂ້າພະເຈົ້າບໍ່ໄດ້ສະແຫວງຫາກຽດຕິຍົດຂອງໂລກ, **ແອວ** 60:36.

ມານໄດ້ກະບົດຕໍ່ຕ້ານເຮົາ, ກ່າວວ່າ, ຈົ່ງມອບກຽດຕິຍົດຂອງທ່ານໃຫ້ເຮົາ, ຊຶ່ງເປັນອຳນາດຂອງເຮົາ, **ຄພ** 29:36. ຄົນທີ່ຊື່ສັດຈະໄດ້ສວມມົງກຸດດ້ວຍກຽດຕິຍົດ, **ຄພ** 75:5 (ຄພ 124:55). ພຣະຜູ້ເປັນເຈົ້າເບີກບານທີ່ຈະໃຫ້ກຽດຄົນເຫລົ່ານັ້ນທີ່ຮັບໃຊ້ພຣະອົງ, **ຄພ** 76:5. ພວກເຂົາບໍ່ໄດ້ຖືກເລືອກເພາະວ່າພວກເຂົາສະແຫວງຫາກຽດຕິຍົດຈາກມະນຸດ, **ຄພ** 121:34–35.

ພວກເຮົາເຊື່ອໃນການຍົກຍ້ອງ ແລະ ໃນການສະໜັບສະໜູນກົດໝາຍ, **ຫຼຊ** 1:12 (ຄພ 134:6).

**ໃຫ້ທານ, ການໃຫ້ທານ.** *ເບິ່ງ* ເຄື່ອງຖວາຍ; ຄວາມຜາສຸກ; ຍາກຈົນ; ຖືສິນອົດເຂົ້າ, ການຖືສິນອົດເຂົ້າ *ນຳອີກ*

ການບໍລິຈາກຊ່ວຍເຫລືອຄົນຍາກຈົນ.

ຢ່າຖືສິນກິນທານຕໍ່ໜ້າປະຊາຊົນ, **ມທ** 6:1–4 (3 ນຟ 13:1–4). ແມ່ໝ້າຍຍາກຈົນຄົນນີ້ໄດ້ປ່ອນເງິນລົງໃນຫີບຖວາຍຫລາຍກວ່າຄົນອື່ນທັງໝົດ, **ມຣກ** 12:41–44. ການໃຫ້ເປັນເຫດໃຫ້ມີຄວາມສຸກຫລາຍກວ່າການຮັບ, **ກຈກ** 20:33–35.

ຂ້າພະເຈົ້າຢາກໃຫ້ພວກທ່ານແບ່ງປັນເຂົ້າຂອງ ຂອງພວກທ່ານໃຫ້ແກ່ຄົນຍາກຈົນ, **ມຊຢ** 4:26. ຜູ້ຄົນຂອງສາດສະໜາຈັກຄວນແບ່ງປັນເຂົ້າຂອງຂອງຕົນຕາມທີ່ເຂົາມີ, **ມຊຢ** 18:27.

**ໜັງສືທະບຽນແຫ່ງຊີວິດ.** *ເບິ່ງ* ປຶ້ມແຫ່ງຄວາມຊົງຈຳ *ນຳອີກ*

ໃນຄວາມໝາຍໜຶ່ງ ໜັງສືທະບຽນແຫ່ງຊີວິດ ແມ່ນບັນຊີຂອງຄວາມຄິດ ແລະ ການກະທຳທັງໝົດຂອງບຸກຄົນ—ບັນທຶກຊີວິດຂອງເຂົາ. ເຖິງຢ່າງໃດກໍຕາມ, ພຣະຄຳພີໄດ້ແຈ້ງ

ບອກວ່າ ບັນທຶກໃນສະຫວັນໄດ້ເກັບກຳບັນທຶກຂອງຄົນທີ່ຊື່ສັດ, ລວມທັງຊື່ ແລະ ເລື່ອງລາວທີ່ຊອບທຳຂອງເຂົາເຈົ້າ.

ພຣະຜູ້ເປັນເຈົ້າຈະລຶບຊື່ຜູ້ທີ່ເຮັດບາບອອກຈາກປຶ້ມຂອງພຣະອົງ, **ອພຍ** 32:33.

ຜູ້ທີ່ມີໄຊຊະນະ ຈະບໍ່ຖືກລຶບຊື່ອອກຈາກໜັງສືທະບຽນແຫ່ງຊີວິດ, **ພນມ** 3:5. ໜັງສືອີກເຫລັ້ມໜຶ່ງຖືກເປີດ, ຄືໜັງສືທະບຽນແຫ່ງຊີວິດ, **ພນມ** 20:12 (ຄພ 128:6–7).

ຊື່ຂອງຄົນຊອບທຳຈະຖືກຂຽນໄວ້ໃນໜັງສືທະບຽນແຫ່ງຊີວິດ, **ແອວ** 5:58.

ຄຳອະທິຖານຂອງພວກເຈົ້າໄດ້ຖືກບັນທຶກໄວ້ຢູ່ໃນປຶ້ມລາຍຊື່ຂອງຜູ້ທີ່ໄດ້ຮັບການຊຳລະໃຫ້ບໍລິສຸດ, **ຄພ** 88:2.

**ໜັງສືນິມິດ.** *ເບິ່ງ* ພຣະນິມິດຂອງໂຢຮັນ *ນຳອີກ*

ພຣະທຳພຣະນິມິດ, ໜັງສືສະບັບສຸດທ້າຍໃນພຣະຄຳພີໃໝ່; ສາມາດໝາຍເຖິງການເປີດເຜີຍທີ່ແປກປະຫລາດນຳອີກ; ມາຈາກພາສາກຣີກ ໝາຍຄວາມວ່າ "ໄດ້ເປີດເຜີຍ" ຫລື "ໄດ້ເປີດ."

**ໜັງສືມາດຕະຖານ.** *ເບິ່ງ* ວິໄນສາດສະໜາ

**ໜ້າກຽດຊັງ, ຄວາມໜ້າກຽດຊັງ.** *ເບິ່ງ* ບາບ *ນຳອີກ*

ໃນພຣະຄຳພີ, ເປັນບາງສິ່ງທີ່ເຮັດໃຫ້ເກີດຄວາມລັງກຽດ ຫລື ຄວາມກຽດຊັງຕໍ່ຄົນຊອບທຳ ແລະ ບໍລິສຸດ.

ຄົນເວົ້າຕົວະນັ້ນ ພຣະຜູ້ເປັນເຈົ້າກຽດຊັງໜັກ, **ສພສ** 12:22.

ຄວາມຈອງຫອງເປັນທີ່ໜ້າກຽດຊັງຕໍ່ສາຍພຣະເນດຂອງພຣະຜູ້ເປັນເຈົ້າ, **ຢຄ** 2:13–22. ຄົນຊົ່ວຖືກສົ່ງໄປເຫັນພາບແຫ່ງຄວາມຫລັງອັນໜ້າກຽດຊັງຂອງພວກເຂົາ, **ມຊຢ** 3:25. ຄວາມບໍ່ບໍລິສຸດທາງເພດ ເປັນສິ່ງທີ່ໜ້າກຽດຊັງທີ່ສຸດເໜືອກວ່າບາບທັງປວງນອກຈາກການຄາດຕະກຳ ແລະ ການປະຕິເສດພຣະວິນຍານບໍລິສຸດ, **ແອວ** 39:3–5.

ຄວາມເຄືອງແຄ້ນຂອງພຣະຜູ້ເປັນເຈົ້າເກີດຂຶ້ນກັບຄວາມໜ້າກຽດຊັງຂອງພວກເຂົາ, **ຄພ** 97:24.

**ໜ້າທີ່.** *ເບິ່ງ* ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ *ນຳອີກ*

ໃນພຣະຄຳພີ, ເປັນພາລະ, ການມອບໝາຍ, ຫລື ໜ້າທີ່ຮັບຜິດຊອບ, ສ່ວນຫລາຍແລ້ວໄດ້ຖືກມອບໃຫ້ໂດຍພຣະຜູ້ເປັນເຈົ້າ ຫລື ຜູ້ຮັບໃຊ້ຂອງພຣະອົງ.

ຈົ່ງເຮັດຕາມຂໍ້ຄຳສັ່ງຂອງພຣະອົງ: ເພາະພຣະອົງໄດ້ສ້າງມະນຸດຂຶ້ນມາກໍເພື່ອສິ່ງທັງໝົດນີ້, **ປຢຈ** 12:13. ສິ່ງທີ່ພຣະຜູ້ເປັນເຈົ້າຕ້ອງການຈາກພວກເຮົານັ້ນແມ່ນດັ່ງນີ້, ເຮັດສິ່ງທີ່ຖືກຕ້ອງ, **ມກ** 6:8.

ພວກຂ້ານ້ອຍຈຳຕ້ອງເຊື່ອຟັງພຣະເຈົ້າຫລາຍກວ່າມະນຸດ, **ກຈກ** 5:29.

ພວກເຂົາຈຶ່ງຖືກລົງໂທດດ້ວຍຄວາມທຸກທໍລະມານ ເພື່ອເຮັດໃຫ້ສຳນຶກເຖິງໜ້າທີ່ຂອງພວກເຂົາ, **ມຊຢ** 1:17.

ໜ້າທີ່ຂອງແອວເດີ, ປະໂລຫິດ, ຄູສອນ, ແລະ ມັກຄະນາຍົກ ໄດ້ຖືກອະທິບາຍໄວ້, **ຄພ** 20:38–67. ຜູ້ດຳລົງຖານະປະໂລຫິດຕ້ອງເຮັດໜ້າທີ່ທຸກຢ່າງໃນຄອບຄົວ, **ຄພ** 20:47, 51. ໜ້າທີ່ຂອງສະມາຊິກຫລັງຈາກບັບຕິສະມາໄດ້ຖືກອະທິບາຍໄວ້, **ຄພ** 20:68–69. ພວກແອວເດີຂອງເຮົາຄວນລໍຖ້າຊົ່ວໄລຍະໜຶ່ງ ເພື່ອວ່າຜູ້ຄົນຂອງເຮົາຈະຮູ້ຈັກໜ້າທີ່ຂອງພວກເຂົາໃຫ້ສົມບູນຫລາຍຂຶ້ນ, **ຄພ** 105:9–10. ໃຫ້ທຸກຄົນຮຽນຮູ້ໜ້າທີ່ຂອງຕົນ, **ຄພ** 107:99–100.

**ໜີ້.** *ເບິ່ງ* ອະໄພ, ໃຫ້ອະໄພ *ນຳອີກ*

ດັ່ງທີ່ໃຊ້ໃນພຣະຄຳພີ, ເງິນ ຫລື ຊັບສິນທີ່ຕິດຄົນອື່ນເຮັດໃຫ້ຜູ້ຢືມຢູ່ໃນຮູບແບບຂອງຄວາມເປັນທາດ. ໃນຄວາມໝາຍໜຶ່ງອີກ, ພຣະເຢຊູໄດ້ສິດສອນວ່າ ເຮົາຄວນຂໍໃຫ້ພຣະບິດາອະໄພໃຫ້ພວກເຮົາສຳລັບໜີ້ສິນຂອງເຮົາ, ຫລື ປົດປ່ອຍເຮົາຈາກການຈ່າຍຄ່າບາບຂອງເຮົາ—ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດ—ຫລັງຈາກເຮົາໄດ້ອະໄພໃຫ້ຄົນອື່ນ

ສຳລັບຄວາມຜິດທີ່ເຂົາເຈົ້າໄດ້ກະທຳກັບເຮົາ (ມທ 6:12; 3 ນຟ 13:11).

ຄົນຊົ່ວຢືມເງິນໄປແລ້ວບໍ່ເຄີຍສົ່ງຄືນ, **ພສສ** 37:21. ການເປັນໜີ້ຄົນຍ່ອມເຮັດໃຫ້ຕົນເປັນທາດຮັບໃຊ້ໄດ້, **ສພສ** 22:7.

ເຮົາໄດ້ຍົກໜີ້ທັງໝົດໃຫ້ເຈົ້າ: ເຈົ້າຄວນຈະເມດຕາສົງສານເໝືອນດັ່ງທີ່ເຮົາໄດ້ເຮັດບໍ່ແມ່ນບໍ, **ມທ** 18:23–35. ຢ່າເປັນໜີ້ຜູ້ໃດ ເວັ້ນໄວ້ແຕ່ຄວາມຮັກທີ່ມີຕໍ່ກັນແລະກັນ, **ຣມ** 13:8.

ພວກທ່ານເປັນໜີ້ຕະຫລອດການຕໍ່ພຣະບິດາເທິງສະຫວັນຂອງທ່ານ, **ມຊຢ** 2:21–24, 34. ຜູ້ໃດກໍຕາມທີ່ຂໍຢືມຈາກເພື່ອນບ້ານຂອງຕົນ ກໍຄວນສົ່ງຄືນຂອງທີ່ຕົນຢືມມາ, **ມຊຢ** 4:28.

ຈົ່ງຊຳລະໜີ້ສິນ, ແລະ ຈົ່ງປົດປ່ອຍຕົວເຈົ້າເອງຈາກຄວາມເປັນທາດ, **ຄພ** 19:35. ມີການສັ່ງຫ້າມບໍ່ໃຫ້ເປັນໜີ້ສັດຕູຂອງພວກເຈົ້າ, **ຄພ** 64:27. ຈົ່ງຊຳລະໜີ້ສິນຂອງເຈົ້າ, **ຄພ** 104:78. ຢ່າເປັນໜີ້ອີກໃນການສ້າງບ້ານຂອງພຣະຜູ້ເປັນເຈົ້າ, **ຄພ** 115:13.

**ໜຶ່ງ.** *ເບິ່ງ* ເປັນອັນໜຶ່ງດຽວກັນ, ຄວາມເປັນອັນໜຶ່ງດຽວກັນ; ພຣະເຈົ້າ, ຝ່າຍພຣະເຈົ້າ

**ໜຶ່ງສອກ**

ສິ່ງວັດແທກຄວາມຍາວໃນບັນດາຊາວເຮັບເຣີ—ເລີ່ມຕົ້ນຈາກສອກລົງໄປຫາປາຍນິ້ວມື

**ໝັ້ນໃຈ, ຄວາມໝັ້ນໃຈ.** *ເບິ່ງ* ສັດທາ; ເຊື່ອ, ຄວາມເຊື່ອ; ໄວ້ວາງໃຈ, ຄວາມໄວ້ວາງໃຈ *ບຳອີກ*

ການມີຄວາມໝັ້ນໃຈ, ຄວາມເຊື່ອ, ຄວາມໄວ້ວາງໃຈ, ຫລື ສັດທາໃນບາງສິ່ງ, ໂດຍສະເພາະໃນພຣະເຈົ້າ ແລະ ພຣະເຢຊູຄຣິດ.

ການໄວ້ວາງໃຈໃນພຣະຜູ້ເປັນເຈົ້າເປັນການດີກວ່າທີ່ຈະເພິ່ງພາອາໄສມະນຸດ, **ພສສ** 118:8. ພຣະຜູ້ເປັນເຈົ້າຈະຮັກສາເຈົ້າໄວ້ໃຫ້ປອດໄພ, **ສພສ** 3:26.

ເມື່ອພຣະຄຣິດສະເດັດມາປະກົດ, ເຮົາທັງຫລາຍຈະມີໃຈກ້າ, **1 ຢຮ** 2:28.

ຊາວນີໄຟທີ່ຊົ່ວໝົດຄວາມໝັ້ນໃຈຈາກລູກໆຂອງພວກເຂົາ, **ຢຄ** 2:35.

ເມື່ອນັ້ນຄວາມໝັ້ນໃຈຂອງທ່ານຈະແຂງແກ່ນຂຶ້ນໃນທີ່ປະທັບຂອງພຣະເຈົ້າ, **ຄພ** 121:45.

**ໝາກກອກເທດ, ຕົ້ນ.** *ເບິ່ງ* ນ້ຳມັນ; ອິດສະຣາເອນ *ບຳອີກ*

ຕົ້ນໄມ້ທີ່ມີຢູ່ທົ່ວໄປໃນອິດສະຣາເອນ ແລະ ເປັນແຫລ່ງກະສິກຳທີ່ສຳຄັນໃນແຜ່ນດິນໃນພຣະຄຣິສຕະທຳຄຳພີ. ມັນຖືກປູກຝັງເພື່ອໃຊ້ເປັນຟືນ, ສຳລັບໝາກ, ແລະ ນ້ຳມັນ. ຕົ້ນໝາກກອກຖືກໃຊ້ເລື້ອຍໆຢູ່ໃນພຣະຄຳພີເພື່ອເປັນເຄື່ອງໝາຍເຖິງເຊື້ອສາຍອິດສະຣາເອນ.

ເຊື້ອສາຍອິດສະຣາເອນໄດ້ຖືກປຽບທຽບໃສ່ກັບຕົ້ນໝາກກອກເທດ ຊຶ່ງກິ່ງງ່າຖືກຫັກອອກ ແລະ ກະຈັດກະຈາຍໄປ, **1 ນຟ** 10:12 (1 ນຟ 15:12). ພຣະຜູ້ເປັນເຈົ້າໄດ້ປຽບທຽບເຊື້ອສາຍອິດສະຣາເອນໃສ່ກັບຕົ້ນໝາກກອກເທດ, **ຢຄ** 5–6.

ໂຈເຊັບ ສະມິດ ໄດ້ເອີ້ນການເປີດເຜີຍໃນພາກທີ 88 ວ່າ ໃບໝາກກອກ, **ຄພ** 88 ຫົວພາກ. ເຈົ້ານາຍຄົນໜຶ່ງໄດ້ບອກພວກຄົນໃຊ້ຂອງລາວໃຫ້ອອກໄປຍັງສວນອະງຸ່ນ ແລະ ໃຫ້ປູກຕົ້ນໝາກກອກສິບສອງຕົ້ນ, **ຄພ** 101:43–62.

**ໝາກກອກເທດ, ພູ.** *ເບິ່ງ* ເຄັດເຊມາເນ *ບຳອີກ*

ຄ້ອຍພູທີ່ຢູ່ເບື້ອງຕາເວັນອອກຂອງຮ່ອມພູກິດໂຣນ, ເບື້ອງຕາເວັນອອກຂອງ ເຢຣູຊາເລັມ. ຢູ່ຄ້ອຍເບື້ອງຕາເວັນຕົກ, ໃກ້ຕີນພູ, ແມ່ນສວນເຄັດເຊມາເນ. ເມືອງເບັດຟາເຄ ແລະ ເມືອງເບັດທານີ ຕັ້ງຢູ່ເທິງຄ້ອຍພູເບື້ອງຕາເວັນອອກ. ພູໜ່ວຍນີ້ເປັນສະຖານທີ່ມີເຫດການຫລາຍຢ່າງເກີດຂຶ້ນໃນສະໄໝພຣະຄຣິສຕະທຳຄຳພີ (ມທ 24:3) ແລະ ຈະເປັນສະຖານທີ່ສຳຄັນໃນເຫດການທີ່ຈະເກີດຂຶ້ນໃນຍຸກສຸດທ້າຍດ້ວຍ (ຊກຢ 14:3–5; ຄພ 45:48–54; 133:20).

**ໝາກໄມ້ທີ່ຕ້ອງຫ້າມ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ເອເດນ

**ໝິ່ນປະໝາດ, ການໝິ່ນປະໝາດ.** *ເບິ່ງ* ຄຳຫຍາບຄາຍ; ບາບທີ່ອະໄພໃຫ້ບໍ່ໄດ້ *ນຳອີກ*

ການເວົ້າຈາແບບບໍ່ນັບຖື ຫລື ບໍ່ຄາລະວະຕໍ່ພຣະເຈົ້າ ຫລື ສິ່ງທີ່ສັກສິດ.

ພຣະເຢຊູໄດ້ຖືກຊາວຢິວກ່າວຫາຫລາຍເທື່ອ ເພາະການກ່າວໝິ່ນປະໝາດ ເພາະວ່າພຣະອົງໄດ້ອ້າງສິດທີ່ຈະໃຫ້ອະໄພບາບ (ມທ 9:2–3; ລກ 5:20–21), ເພາະວ່າພຣະອົງໄດ້ເອີ້ນຕົນເອງວ່າພຣະບຸດຂອງພຣະເຈົ້າ (ຢຮ 10:22–36; 19:7), ແລະ ເພາະວ່າພຣະອົງໄດ້ກ່າວກັບພວກເຂົາວ່າ ພວກເຂົາຈະເຫັນພຣະອົງນັ່ງຢູ່ທາງເບື້ອງຂວາຂອງຜູ້ຊົງລິດອຳນາດຍິ່ງໃຫຍ່ ແລະ ກຳລັງສະເດັດມາເທິງເມກໃນສະຫວັນ (ມທ 26:64–65). ການກ່າວຫານັ້ນອາດເປັນຄວາມຈິງ ຖ້າຫາກພຣະອົງບໍ່ໄດ້ເປັນດັ່ງທີ່ພຣະອົງກ່າວວ່າພຣະອົງເປັນ. ການກ່າວຫານັ້ນໄດ້ນຳຂຶ້ນຕໍ່ຕ້ານພຣະອົງໂດຍພະຍານເທັດຢູ່ທີ່ສານຊານເຮດຣິນ (ມທ 26:59–61) ວ່າໝິ່ນປະໝາດພຣະວິຫານຂອງພຣະເຈົ້າ. ການໝິ່ນປະໝາດຕໍ່ຕ້ານພຣະວິນຍານບໍລິສຸດ, ຊຶ່ງເປັນການປະຕິເສດພຣະຄຣິດດ້ວຍຄວາມເຕັມໃຈ ຫລັງຈາກໄດ້ມີຄວາມຮູ້ແຈ້ງກ່ຽວກັບພຣະອົງ, ແມ່ນບາບທີ່ໃຫ້ອະໄພບໍ່ໄດ້ (ມທ 12:31–32; ມຣກ 3:28–29; ຄພ 132:27).

ຄົນ ທີ່ກ່າວ ໝິ່ນ ປະ ໝາດ ພຣະ ນາມ ຂອງພຣະ ຜູ້ ເປັນ ເຈົ້າ ຈະ ຖືກ ປະ ຫານ, **ລລວ** 24:11–16.

ສັດຕູຂອງພຣະຜູ້ເປັນເຈົ້າຈະບໍ່ຖືກປະໃຫ້ເຫລືອ ຢູ່ ເພື່ອໝິ່ນ ປະໝາດພຣະນາມຂອງພຣະອົງ, **ຄພ** 105:15. ການແກ້ແຄ້ນຈະມາເຖິງຜູ້ທີ່ໝິ່ນປະໝາດພຣະຜູ້ເປັນເຈົ້າ, **ຄພ** 112:24–26.

**ຫລັກທຳ.** *ເບິ່ງ* ພຣະກິດຕິຄຸນ *ນຳອີກ*

ຄຳສອນຂັ້ນພື້ນຖານ, ຄວາມຈິງ, ຫລື ກົດ. ຫລັກທຳ ແລະ ພິທີການເບື້ອງຕົ້ນແຫ່ງພຣະກິດຕິຄຸນຄື ສັດທາໃນອົງພຣະເຢຊູຄຣິດເຈົ້າ ແລະ ການກັບໃຈ (ຫຼຊ 1:4).

ບໍ່ປະຫລັກທຳແຫ່ງຄຳສອນຂອງພຣະຄຣິດໄວ້, ຂໍໃຫ້ເຮົາກ້າວໜ້າໄປສູ່ຄວາມດີພ້ອມທຸກຢ່າງ, **ປຈສ, ຮຣ** 6:1.

ແອວເດີ, ປະໂລຫິດ, ແລະ ຄູສອນ ຈະສອນຫລັກທຳພຣະກິດຕິຄຸນຂອງເຮົາ, ຊຶ່ງມີຢູ່ໃນພຣະຄຳພີ, **ຄພ** 42:12. ໄດ້ຮັບການແນະນຳຢ່າງສົມບູນຫລາຍຂຶ້ນໃນຫລັກທຳ, ໃນຄຳສອນ, ໃນທຸກສິ່ງ, **ຄພ** 88:78 (ຄພ 97:14). ມະນຸດທຸກໆຄົນຈະໄດ້ກະທຳໃນຄຳສອນ ແລະ ຫລັກທຳ ຕາມອຳເພີໃຈອັນຊອບທຳ ຊຶ່ງເຮົາໄດ້ມອບໃຫ້ແກ່ເຂົາ, **ຄພ** 101:78. ຫລັກທຳແຫ່ງຄວາມຮູ້ແຈ້ງໃດກໍຕາມທີ່ພວກເຮົາໄດ້ຮັບໃນຊີວິດນີ້ ມັນຈະລຸກຂຶ້ນກັບພວກເຮົາໃນການຟື້ນຄືນຊີວິດ, **ຄພ** 130:18–19.

**ຫລັກທຳເບື້ອງຕົ້ນຂອງພຣະກິດຕິຄຸນ.** *ເບິ່ງ* ກັບໃຈ, ການກັບໃຈ; ສັດທາ; ບັບຕິສະມາ, ໃຫ້ບັບຕິສະມາ; ພຣະວິນຍານບໍລິສຸດ

**ຫລັກແຫ່ງຄວາມເຊື່ອ.** *ເບິ່ງ* ໄຂ່ມຸກອັນລ້ຳຄ່າ; ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ຄວາມເຊື່ອຂັ້ນພື້ນຖານສິບສາມຂໍ້ ຊຶ່ງສະມາຊິກຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ ປະຕິບັດຕາມ.

ທຳອິດ ໂຈເຊັບ ສະມິດ ໄດ້ຂຽນມັນໃນຈົດໝາຍ ເຖິງ ຈອນ ເວັ້ນເວີທ໌, ບັນນາທິການຂອງ *Chicago Democrat,* ໃນການຕອບຕໍ່ຄຳຮຽກຮ້ອງຂອງລາວທີ່ຢາກຮູ້ຈັກວ່າສະມາຊິກຂອງສາດສະໜາຈັກໄດ້ເຊື່ອໃນສິ່ງໃດແດ່. ຈົດໝາຍນັ້ນໄດ້ເປັນທີ່ຮູ້ຈັກກັນວ່າ ຈົດໝາຍເວັ້ນເວີທ໌ ແລະ ໄດ້ຖືກຈັດພິມເປັນເທື່ອທຳອິດໃນ *Times and Seasons* ໃນເດືອນມີນາ 1842. ໃນວັນທີ 10 ເດືອນຕຸລາ, 1880, ຫລັກແຫ່ງຄວາມເຊື່ອ ໄດ້ຖືກຮັບຮູ້ຢ່າງເປັນທາງການວ່າເປັນຂໍ້ພຣະຄຳພີ ດ້ວຍການອອກສຽງຂອງສະມາຊິກຂອງສາດສະໜາຈັກ ແລະ ໄດ້ຖືກຮ່ວມເຂົ້າໄວ້ໃນພຣະຄຳພີໄຂ່ມຸກອັນລ້ຳຄ່າ.

**ຫລອກລວງ, ການຫລອກລວງ, ຄວາມຫລອກລວງ.** *ເບິ່ງ* ຕົວະ; ມານຍາ *ບຳອີກ*

ໃນພຣະຄຳພີ, ຫລອກລວງຄືການເຮັດໃຫ້ບາງຄົນເຊື່ອວ່າບາງສິ່ງເປັນຄວາມຈິງ.

ຜູ້ທີ່ບໍ່ສັນຍາຢ່າງຫລອກລວງຈະມີສິດຂຶ້ນໄປທີ່ເນີນພູຂອງພຣະຜູ້ເປັນເຈົ້າ, **ພສສ** 24:3–4. ໂຜດຊ່ວຍກູ້ຂ້ານ້ອຍຈາກຄົນຂີ້ຕົວະ, **ພສສ** 43:1. ເຄາະກຳເປັນຂອງຜູ້ທີ່ເອີ້ນສິ່ງທີ່ດີວ່າເປັນສິ່ງທີ່ຊົ່ວ, ແລະ ເອີ້ນສິ່ງທີ່ຊົ່ວວ່າເປັນສິ່ງທີ່ດີ, **ອຊຢ** 5:20 (2 ນຟ 15:20).

ຢ່າມົວແຕ່ຫລອກລວງຕົນເອງຢູ່ເລີຍ, **1 ກຣທ** 3:18. ຢ່າໃຫ້ຜູ້ໃດຫລອກລວງພວກເຈົ້າດ້ວຍຄຳເວົ້າອັນໄຮ້ປະໂຫຍດ, **ອຟຊ** 5:6. ຄົນຊົ່ວຈະລໍ້ລວງ ແລະ ຈະຖືກລໍ້ລວງ, **2 ຕມທ** 3:13. ຊາຕານຜູ້ຫລອກລວງມະນຸດທັງໂລກກໍຖືກຊັດຖິ້ມລົງເສຍ, **ພນມ** 12:9. ຊາຕານຖືກຜູກມັດໄວ້ ເພື່ອບໍ່ໃຫ້ມັນໄດ້ຫລອກລວງບັນດາປະຊາຊາດທັງຫລາຍອີກຕໍ່ໄປ, **ພນມ** 20:1–3.

ຈະຫລອກລວງພຣະຜູ້ເປັນເຈົ້າບໍ່ໄດ້, **2 ນຟ** 9:41. ຖ້າຫາກພວກທ່ານຈະໄປຕາມພຣະບຸດ, ໂດຍບໍ່ມີການຫລອກລວງຕໍ່ພຣະພັກຂອງພຣະເຈົ້າ, ພວກທ່ານຈະໄດ້ຮັບພຣະວິນຍານບໍລິສຸດ, **2 ນຟ** 31:13. ເຊເຣັມໄດ້ຮັບສາລະພາບວ່າລາວໄດ້ຖືກອຳນາດຂອງມານມາຫລອກລວງ, **ຢຄ** 7:18. ຜູ້ຄົນຂອງກະສັດໂນອາໄດ້ຖືກຫລອກລວງດ້ວຍຄຳຍົກຍ້ອງ, **ມຊຢ** 11:7.

ຄົນສະຫລາດໄດ້ຮັບເອົາພຣະວິນຍານສັກສິດເພື່ອການນຳພາ, ແລະ ບໍ່ໄດ້ຖືກຫລອກລວງ, **ຄພ** 45:57. ວິບັດແກ່ຄົນທີ່ຫລອກລວງ, **ຄພ** 50:6.

ມັນໄດ້ກາຍເປັນຊາຕານ, ບິດາຂອງຄວາມຕົວະທັງປວງ, ທີ່ຈະຫລອກລວງ ແລະ ເຮັດໃຫ້ມະນຸດບອດ, **ມຊ** 4:4.

**ຫລິ້ນຊູ້.** *ເບິ່ງ* ການຂາດສິນທຳທາງເພດ; ການລ່ວງປະເວນີ; ການຮ່ວມເພດກັບເພດດຽວກັນ; ຕັນຫາໜ້າມືດ, ຄວາມຕັນຫາໜ້າມືດ; ພົມມະຈັນ *ບຳອີກ*

ການຮ່ວມສຳພັນທາງເພດທີ່ບໍ່ຖືກຕ້ອງຕາມກົດໝາຍຂອງຊາຍ ແລະ ຍິງ. ເຖິງແມ່ນວ່າໂດຍທົ່ວໄປແລ້ວ ເມື່ອກ່າວເຖິງການຫລິ້ນຊູ້ຈະໝາຍເຖິງການຮ່ວມເພດລະຫວ່າງຄົນທີ່ແຕ່ງງານແລ້ວກັບບາງຄົນທີ່ບໍ່ໄດ້ເປັນຄູ່ແຕ່ງງານຂອງຕົນ, ຢູ່ໃນພຣະຄຳພີ ມັນອາດໝາຍເຖິງຄົນທີ່ຍັງບໍ່ແຕ່ງງານນຳອີກ.

ບາງເທື່ອ ການຫລິ້ນຊູ້ ໄດ້ຖືກໃຊ້ເປັນເຄື່ອງໝາຍຂອງການປະຖິ້ມຄວາມເຊື່ອຂອງປະຊາຊາດ ຫລື ກຸ່ມຜູ້ຄົນຈາກວິທີທາງຂອງພຣະຜູ້ເປັນເຈົ້າ (ຈບຊ 25:1–3; ຢມຢ 3:6–10; ອຊກ 16:15–59; ຮສອ 4).

ໂຢເຊັບຈະບໍ່ເຮັດຄວາມຊົ່ວຮ້າຍອັນໃຫຍ່ຫລວງນີ້, ແລະ ເຮັດບາບຕໍ່ຕ້ານພຣະເຈົ້າ, **ປຖກ** 39:7–12. ຢ່າຫລິ້ນຊູ້ສູ່ຜົວເມຍຜູ້ອື່ນ, **ອພຍ** 20:14.

ຜູ້ໃດທີ່ແນມເບິ່ງຜູ້ຍິງດ້ວຍໃຈຄຶດຢາກໄດ້ຍິງນັ້ນ, ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ, **ມທ** 5:28. ຄົນຫລິ້ນຊູ້ກໍດີ, ຄົນຫລິ້ນຊູ້ສູ່ຜົວເມຍກໍດີ ຈະບໍ່ມີສ່ວນໃນອານາຈັກຂອງພຣະເຈົ້າ, **1 ກຣທ** 6:9–10. ພຣະເຈົ້າຈະຕັດສິນຄົນເຮັດຜິດສິນທຳ ແລະ ຄົນຫລິ້ນຊູ້, **ຮຣ** 13:4.

ການຫລິ້ນຊູ້ເປັນສິ່ງທີ່ໜ້າກຽດຊັງທີ່ສຸດເໜືອກວ່າບາບທັງປວງນອກຈາກການເຮັດໃຫ້ຜູ້ບໍລິສຸດຕ້ອງເສຍຊີວິດ ຫລື ການປະຕິເສດພຣະວິນຍານບໍລິສຸດ, **ແອວ** 39:3–5.

ຄົນທີ່ຫລິ້ນຊູ້, ແລະ ບໍ່ກັບໃຈ, ຈະຖືກຂັບໄລ່ອອກໄປ, **ຄພ** 42:23–26. ຖ້າຄົນໃດຫລິ້ນຊູ້ໃນໃຈຂອງເຂົາ, ເຂົາຈະບໍ່ມີພຣະວິນຍານສະຖິດຢູ່ນຳ, **ຄພ** 63:14–16.

**ຫລຸມສົບ.** *ເບິ່ງ* ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ *ບຳອີກ*

ສະຖານທີ່ຝັງສົບທີ່ເປັນມະຕະ. ເພາະການຊົດໃຊ້, ທຸກຄົນຈະຟື້ນຄືນຊີວິດຈາກຫລຸມສົບ.

ຫລາຍຄົນທີ່ຕາຍໄປແລ້ວກໍຄືນສູ່ຊີວິດ ແລະ ໄດ້ອອກຈາກອຸບມຸງຂອງພວກຕົນໄປຫລັງຈາກພຣະຄຣິດໄດ້ຟື້ນຄືນພຣະຊົນ, **ມທ** 27:52–53 (3 ນຟ 23:9–13). ໂອ້ ຄວາມຕາຍເອີຍ, ໄຊຊະນະຂອງມຶງຢູ່ໃສ, **1 ກຣທ** 15:55.

ຫລຸມສົບຕ້ອງປ່ອຍຄົນຕາຍຂອງມັນຂຶ້ນມາ, **2 ນຟ** 9:11–13.

ຄົນທີ່ໄດ້ນອນຢູ່ໃນຫລຸມສົບຈະອອກມາ, **ຄພ** 88:97–98. ອ່າງບັບຕິສະມາເປັນສັນຍາລັກເຖິງຫລຸມສົບ, **ຄພ** 128:12–13.

**ເຫລົ່າທູດຜູ້ປະຕິບັດສາດສະໜາກິດ.** *ເບິ່ງ* ທູດ, ເທວະດາ

**ເຫລົ້າ.** *ເບິ່ງ* ພຣະວາຈາແຫ່ງປັນຍາ

**ຫວັງ, ຄວາມຫວັງ.** *ເບິ່ງ* ສັດທາ *ບຳອີກ*

ຄວາມຄາດຫວັງດ້ວຍຄວາມໝັ້ນໃຈ ແລະ ຄວາມ ຫວັງ ທີ່ ຈະ ໄດ້ຮັບພອນ ທີ່ ສັນຍາໄວ້ ເລື່ອງຄວາມຊອບທຳ. ພຣະຄຳພີມັກກ່າວເຖິງ ຄວາມຫວັງວ່າເປັນການຄາດຫວັງທີ່ຈະມີຊີວິດນິລັນດອນຜ່ານສັດທາໃນພຣະເຢຊູຄຣິດ.

ຄົນທີ່ໄວ້ວາງໃຈໃນພຣະຜູ້ເປັນເຈົ້າຈະໄດ້ຮັບພອນ, **ຢມຢ** 17:7. ພຣະຜູ້ເປັນເຈົ້າຈະປົກປ້ອງຜູ້ຄົນຂອງພຣະອົງ, **ຢອ** 3:16.

ພວກເຮົາຈະມີຄວາມຫວັງດ້ວຍຄວາມອົດທົນ ແລະ ດ້ວຍພຣະຄຳພີ, **ຣມ** 15:4. ພຣະເຈົ້າໄດ້ໃຫ້ເຮົາເຂົ້າສູ່ຄວາມຫວັງອັນມີຊີວິດຢູ່ໂດຍການຟື້ນຄືນພຣະຊົນຂອງພຣະຄຣິດ, **1 ປຕ** 1:3. ທຸກຄົນທີ່ມີຄວາມຫວັງຢ່າງນີ້ ກໍຊຳລະຕົນໃຫ້ບໍລິສຸດ, **1 ຢຮ** 3:2–3.

ພວກທ່ານຕ້ອງມຸ້ງໜ້າ, ໂດຍມີຄວາມສະຫວ່າງຢ່າງບໍລິບູນຂອງຄວາມຫວັງ, **2 ນຟ** 31:20. ໃຫ້ເບິ່ງວ່າພວກທ່ານມີສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ, **ແອວ** 7:24 (1 ກຣທ 13:13; ມຣນ 10:20). ເຮົາຫວັງວ່າພວກທ່ານຈະໄດ້ຍິນຖ້ອຍຄຳຂອງເຮົາ, ໂດຍຫວັງວ່າພວກທ່ານຈະໄດ້ຮັບຊີວິດນິລັນດອນ, **ແອວ** 13:27–29. ຖ້າພວກທ່ານມີສັດທາ, ພວກທ່ານກໍຫວັງໃນສິ່ງທີ່ບໍ່ເຄີຍເຫັນ, ຊຶ່ງເປັນຄວາມຈິງ, **ແອວ** 32:21 (ຮຣ 11:1). ຄວາມຫວັງມາຈາກສັດທາ ແລະ ເຮັດຫລັກໝັ້ນໃຫ້ແກ່ຈິດວິນຍານ, **ອທ** 12:4 (ຮຣ 6:17–19). ມະນຸດຕ້ອງມີຄວາມຫວັງ ຖ້າບໍ່ດັ່ງນັ້ນ ເຂົາຈະຮັບມໍລະດົກບໍ່ໄດ້, **ອທ** 12:32. ມໍມອນໄດ້ສອນກ່ຽວກັບສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ, **ມຣນ** 7:1. ທ່ານຈະຫວັງໂດຍທາງການຊົດໃຊ້ຂອງພຣະເຢຊູຄຣິດ ເພື່ອຖືກຍົກຂຶ້ນສູ່ຊີວິດນິລັນດອນ, **ມຣນ** 7:40–43. ພຣະວິນຍານບໍລິສຸດເຮັດໃຫ້ທ່ານເຕັມໄປດ້ວຍຄວາມຫວັງ, **ມຣນ** 8:26 (ຣມ 15:13).

ເຂົາເຈົ້າໄດ້ຈາກຊີວິດມະຕະໄປແລ້ວ, ໝັ້ນຄົງໃນຄວາມຫວັງແຫ່ງການຟື້ນຄືນຊີວິດອັນຮຸ່ງເຫລື້ອມ, **ຄພ** 138:14.

**ຫວ້ານຢາທີ່ກີເລອາດ**

ຢາງໄມ້ຫອມ ຫລື ເຄື່ອງເທດທີ່ໃຊ້ສຳລັບການປິ່ນປົວບາດແຜ (ປຖກ 43:11; ຢມຢ 8:22; 46:11; 51:8). ຕົ້ນໄມ້ຊະນິດໜຶ່ງທີ່ຜະລິດນ້ຳຢາງ ຊຶ່ງຈາກນ້ຳຢາງນັ້ນ ມັນໄດ້ຖືກເຮັດເປັນຢາຂີ້ເຜີ້ງ ທີ່ມີເປັນຈຳນວນຫລວງຫລາຍຢູ່ເມືອງກີເລອາດໃນສະໄໝຂອງພຣະຄຳພີເດີມ ຊຶ່ງຢາຂີ້ເຜີ້ງນັ້ນ ຮູ້ຈັກກັນດີວ່າ "ຫວ້ານຢາທີ່ກີເລອາດ" (ປຖກ 37:25; ອຊກ 27:17).

**ອະທິການ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ *ບຳອີກ*

ໝາຍເຖິງ "ດູແລ," ໜ້າທີ່ ຫລື ຕຳແໜ່ງຂອງໜ້າທີ່ຮັບຜິດຊອບ. ອະທິການເປັນຕຳແໜ່ງທີ່ຖືກແຕ່ງຕັ້ງສູ່ຖານະປະໂລຫິດແຫ່ງອາໂຣນ (ຄພ 20:67; 107:87–88), ແລະ ອະທິການເປັນຜູ້ຕັດສິນທົ່ວໄປໃນອິດສະຣາເອນ (ຄພ 107:72, 74).

ພຣະວິນຍານບໍລິສຸດໄດ້ເຮັດໃຫ້ພວກທ່ານເປັນຜູ້ດູແລ, **ກຈກ** 20:28. ເງື່ອນໄຂໄດ້ຖືກຕັ້ງໄວ້ສຳລັບອະທິການ, **1 ຕມທ** 3:1–7 (ຕຕ 1:7).

ອະທິການຈະຕ້ອງໄດ້ຮັບການແຕ່ງຕັ້ງ, **ຄພ** 20:67. ເອດເວີດ ພາດທຣິດ ໄດ້ຮັບໃຊ້ເປັນອະທິການສຳລັບສາດສະໜາຈັກ, **ຄພ** 41:9. ອະທິການສາມາດຫລິງເຫັນຂອງປະທານທາງວິນຍານ, **ຄພ** 46:27, 29. ມະຫາປະໂລຫິດສາມາດປະຕິບັດຕຳແໜ່ງຂອງອະທິການ, **ຄພ** 68:14, 19 (ຄພ 107:17). ອະທິການໄດ້ຖືກແຕ່ງຕັ້ງໄວ້ໂດຍພຣະຜູ້ເປັນເຈົ້າ, **ຄພ** 72. ອະທິການຕ້ອງດູແລຄົນຍາກຈົນ, **ຄພ** 84:112. ອະທິການຕ້ອງປະຕິບັດເລື່ອງທາງຝ່າຍໂລກທັງໝົດ, **ຄພ** 107:68. ອະທິການເປັນປະທານ

ຂອງ ຖານະ ປະ ໂລ ຫິດ ແຫ່ງ ອາໂຣນ, **ຄພ** 107:87–88.

**ອະທິການຜູ້ຄວບຄຸມ**

ເຈົ້າໜ້າທີ່ ຊັ້ນ ຜູ້ ໃຫຍ່ ໃນ ສາດສະໜາ ຈັກ. ເພິ່ນມີໜ້າທີ່ຮັບຜິດຊອບດູແລຝ່າຍສະຫວັດດີການ ໂດຍທົ່ວໄປຂອງສາດສະໜາຈັກ (ຄພ 107:68). ອະທິການຜູ້ຄວບຄຸມ ແລະ ທີ່ປຶກສາຂອງເພິ່ນ, ຜູ້ຊຶ່ງເປັນເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ຄືກັນ, ເປັນຜູ້ຄວບຄຸມຖານະປະໂລຫິດແຫ່ງອາໂຣນຂອງສາດສະໜາຈັກ (ຄພ 68:16–17; 107:76, 87–88).

ເອດເວີດ ພາດທຣິດ ຈະຖືກແຕ່ງຕັ້ງເປັນອະທິການ, **ຄພ** 41:9. ອະທິການຕ້ອງຖືກເອີ້ນ ແລະ ຖືກ ແຕ່ງ ຕັ້ງ ເປັນທາງການ ໂດຍຝ່າຍປະທານສູງສຸດ, **ຄພ** 68:14–15. ຕະກຸນໂດຍກົງຂອງອາໂຣນ ຜູ້ເປັນລູກກົກ, ມີສິດທີ່ຈະຄວບຄຸມ ຖ້າຫາກໄດ້ຮັບການເອີ້ນ, ຖືກແຕ່ງຕັ້ງເປັນທາງການ, ແລະ ຖືກແຕ່ງຕັ້ງໂດຍຝ່າຍປະທານສູງສຸດ, **ຄພ** 68:16, 18–20. ອາດຖືກສອບສວນຢູ່ຕໍ່ໜ້າຝ່າຍປະທານສູງສຸດເທົ່ານັ້ນ, **ຄພ** 68:22–24 (ຄພ 107:82).

**ອະທິຖານ, ການອະທິຖານ, ຄຳອະທິຖານ.**

*ເບິ່ງ* ໄຕ່ຕອງ; ທູນຂໍ; ນະມັດສະການ; ອາແມນ *ນຳອີກ*

ການສື່ສານດ້ວຍຄວາມຄາລະວະນຳພຣະເຈົ້າ ຊຶ່ງໃນລະຫວ່າງນັ້ນ ຜູ້ຄົນຈະຂອບພຣະໄທ ແລະ ທູນຂໍພອນ. ການອະທິຖານເປັນການກ່າວຕໍ່ພຣະບິດາເທິງສະຫວັນຂອງເຮົາໃນພຣະນາມຂອງພຣະເຢຊູຄຣິດ. ການອະທິຖານ ສາມາດກ່າວອອກສຽງ ຫລື ກ່າວຢູ່ໃນໃຈ. ຄວາມຄິດຂອງຜູ້ຄົນ ກໍສາມາດເປັນຄຳອະທິຖານໄດ້ ຖ້າຫາກມັນເຈາະຈົງໃສ່ພຣະເຈົ້າ. ເພງຂອງຄົນຊອບທຳກໍສາມາດເປັນການອະທິຖານເຖິງພຣະເຈົ້າໄດ້ (ຄພ 25:12).

ຈຸດປະສົງຂອງການອະທິຖານ ບໍ່ແມ່ນເພື່ອປ່ຽນພຣະປະສົງຂອງພຣະເຈົ້າ, ແຕ່ເພື່ອຮັບປະກັນຕົວເຮົາເອງ ແລະ ເພື່ອຄົນອື່ນ ໃນພອນຕ່າງໆທີ່ພຣະເຈົ້າເຕັມພຣະໄທທີ່ຈະປະທານໃຫ້, ແຕ່ເຮົາຕ້ອງທູນຂໍກ່ອນຈະໄດ້ຮັບມັນ.

ເຮົາອະທິຖານເຖິງພຣະບິດາໃນພຣະນາມຂອງພຣະຄຣິດ (ຢຮ 14:13–14; 16:23–24). ເຮົາສາມາດອະທິຖານໃນພຣະນາມຂອງພຣະຄຣິດແທ້ໆ ເມື່ອຄວາມປາດຖະໜາຂອງເຮົາເປັນຄວາມປາດຖະໜາຂອງພຣະຄຣິດ (ຢຮ 15:7; ຄພ 46:30). ແລ້ວເຮົາທູນຂໍສິ່ງທີ່ຖືກຕ້ອງ ແລະ ເປັນໄປໄດ້ສຳລັບພຣະເຈົ້າທີ່ຈະປະທານໃຫ້ (3 ນຟ 18:20). ຄຳອະທິຖານບາງຢ່າງອາດບໍ່ໄດ້ຮັບຄຳຕອບ ເພາະວ່າມັນບໍ່ເຂົ້າກັບພຣະປະສົງຂອງພຣະຄຣິດ, ແຕ່ເປັນຄວາມປາດຖະໜາທີ່ເຫັນແກ່ຕົວຂອງມະນຸດ (ຢກບ 4:3; ຄພ 46:9). ແນ່ນອນ, ຖ້າຫາກເຮົາທູນຂໍສິ່ງທີ່ບໍ່ຊອບທຳຈາກພຣະເຈົ້າ, ມັນຈະກາຍເປັນສິ່ງກ່າວໂທດເຮົາ (ຄພ 88:65).

ມະນຸດກໍເລີ່ມຕົ້ນຮ້ອງທູນໂດຍອອກພຣະນາມຂອງພຣະຜູ້ເປັນເຈົ້າ, **ປຖກ** 4:26. ຢູ່ທີ່ແທ່ນບູຊາ, ອັບຣາຮາມກໍໄດ້ຮ້ອງທູນອອກພຣະນາມຂອງພຣະຜູ້ເປັນເຈົ້າ, **ປຖກ** 13:4. ຜູ້ຮັບໃຊ້ຂອງອັບຣາຮາມໄດ້ອະທິຖານຂໍຄວາມຊ່ວຍເຫລືອເລື່ອງການຊອກຫາເມຍໃຫ້ອີຊາກ, **ປຖກ** 24:10–19. ພຣະເຈົ້າໄດ້ຫ້າມຂ້າພະເຈົ້າບໍ່ໃຫ້ຢຸດເຊົາອະທິຖານສຳລັບພວກເຈົ້າ ເພາະເປັນການຜິດຕໍ່ພຣະອົງ, **1 ຊມອ** 12:23. ພຣະຜູ້ເປັນເຈົ້າຮັບຟັງຄຳອະທິຖານຂອງຄົນຊອບທຳ, **ສພສ** 15:29. ຖ້າພວກເຈົ້າຊອກຫາເຮົາຢ່າງໝົດຈິດໝົດໃຈ ພວກເຈົ້າກໍຈະພົບເຮົາ, **ຢມຢ** 29:12–13.

ຈົ່ງອະທິຖານເພື່ອຜູ້ທີ່ຂົ່ມເຫັງເຈົ້າ, **ມທ** 5:44 (ລກ 6:28; 3 ນຟ 12:44). ຈົ່ງອະທິຖານຫາພຣະບິດາຂອງເຈົ້າຜູ້ຢູ່ໃນທີ່ລັບລີ້, **ມທ** 6:5–8 (3 ນຟ 13:5–8). ພວກເຈົ້າຄວນອະທິຖານດັ່ງນີ້, **ມທ** 6:9–13 (ລກ 11:2; 3 ນຟ 13:9). ຈົ່ງໝັ່ນຂໍແລ້ວເຈົ້າຈະໄດ້ຮັບ, **ມທ** 7:7 (3 ນຟ 14:7; ຄພ 4:7; 6:5; 66:9). ພຣະເຢຊູໄດ້ຂຶ້ນໄປເທິງພູແຕ່ຜູ້ດຽວ ເພື່ອອະທິຖານ, **ມທ** 14:23. ຈົ່ງເຝົ້າລະວັງ ແລະ ອະທິຖານຢູ່, ເພື່ອພວກເຈົ້າຈະບໍ່ຕົກໄປໃນການທົດລອງ, **ມທ** 26:41 (ມຣກ 14:38; 3 ນຟ 18:15–18; ຄພ 31:12). ໃຫ້ຜູ້ນັ້ນທູນຂໍດ້ວຍສັດທາ, ຢ່າໃຫ້ມີໃຈສົງໄສ, **ຢກບ** 1:5–6 (ຄພ 42:68;

46:7). ຄຳອະທິຖານຂອງຜູ້ຊອບທຳມີລິດສັກສິດ, **ຢກບ** 5:16.

ເຊື່ອຟັງພຣະວິນຍານ ຊຶ່ງສອນມະນຸດໃຫ້ອະທິຖານ, **2 ນຟ** 32:8–9. ຂ້າພະເຈົ້າໄດ້ຮ້ອງທູນຕໍ່ພຣະອົງດ້ວຍຄຳອ້ອນວອນຢ່າງສຸດກຳລັງ, **ອນ** 1:4. ຂ້າພະເຈົ້າໄດ້ຖືສິນອົດເຂົ້າ ແລະ ອະທິຖານມາຫລາຍມື້, **ແອວ** 5:45–46 (ແອວ 26:22). ພວກເຂົາໄດ້ຍອມຕົນໃນການອະທິຖານ ແລະ ການຖືສິນອົດເຂົ້າ, **ແອວ** 17:3. ພວກທ່ານຈື່ຈຳໄດ້ບໍ່ເລື່ອງທີ່ຊີນັດໄດ້ກ່າວກ່ຽວກັບການອະທິຖານ ຫລື ການນະມັດສະການ, **ແອວ** 33:3. ຈົ່ງຖ່ອມຕົວ, ແລະ ອະທິຖານຢູ່ສະເໝີ, **ແອວ** 34:18–27. ຈົ່ງປຶກສານຳພຣະຜູ້ເປັນເຈົ້າໃນການກະທຳທັງໝົດຂອງລູກ, **ແອວ** 37:37. ເຈົ້າຕ້ອງອະທິຖານຫາພຣະບິດາຢູ່ສະເໝີໃນນາມຂອງເຮົາ, **3 ນຟ** 18:19–20. ຈົ່ງອະທິຖານນຳຄອບຄົວຂອງເຈົ້າ, **3 ນຟ** 18:21. ພຣະເຢຊູໄດ້ອະທິຖານຫາພຣະບິດາ, **3 ນຟ** 19:31–34 (ຢຮ 17; 3 ນຟ 18:16). ພຣະອົງໄດ້ບັນຊາພວກເຂົາວ່າ ພວກເຂົາບໍ່ຄວນເຊົາອະທິຖານຢູ່ໃນໃຈຂອງພວກເຂົາ, **3 ນຟ** 20:1. ຖ້າຫາກເຂົາອະທິຖານ ແຕ່ບໍ່ແມ່ນດ້ວຍເຈດຕະນາອັນແທ້ຈິງຂອງໃຈ, ມັນຈະບໍ່ເປັນປະໂຫຍດກັບເຂົາເລີຍ, **ມຣນ** 7:6–9.

ຢ່າຂໍສິ່ງທີ່ເຈົ້າບໍ່ຄວນຂໍ, **ຄພ** 8:10. ຈົ່ງອະທິຖານສະເໝີ, ເພື່ອເຈົ້າຈະອອກມາຢ່າງຜູ້ຊະນະ, **ຄພ** 10:5. ເຮົາບັນຊາເຈົ້າວ່າ ຈົ່ງອະທິຖານອອກສຽງ ແລະ ຢູ່ໃນໃຈຂອງເຈົ້ານຳອີກ, **ຄພ** 19:28. ພຣະວິນຍານຈະຖືກມອບໃຫ້ແກ່ເຈົ້າໂດຍການອະທິຖານດ້ວຍສັດທາ, **ຄພ** 42:14. ຈົ່ງໄປຍັງບ້ານແຫ່ງການອະທິຖານ ແລະ ຖວາຍສິນລະລຶກຂອງເຈົ້າ, **ຄພ** 59:9 (ມທ 21:13). ພໍ່ແມ່ຈະຕ້ອງສອນລູກໆຂອງພວກເຂົາໃຫ້ອະທິຖານ, **ຄພ** 68:28. ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາຈຶ່ງຊັກຊ້າໃນການໄດ້ຍິນຄຳອະທິຖານຂອງພວກເຂົາ, **ຄພ** 101:7–8 (ມຊຍ 21:15). ຈົ່ງຖ່ອມຕົວ; ແລະ ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ ຈະໃຫ້ຄຳຕອບແກ່ຄຳອະທິຖານຂອງເຈົ້າ, **ຄພ** 112:10.

ອາດາມຖືກບັນຊາໃຫ້ເອີ້ນຫາພຣະເຈົ້າ ໃນພຣະນາມຂອງພຣະບຸດ, **ມຊ** 5:8. ພຣະບິດາ ແລະ ພຣະບຸດໄດ້ປະກົດຕໍ່ໂຈເຊັບ ສະມິດ ເພື່ອຕອບຄຳອະທິຖານຂອງເພິ່ນ, **ຈສ—ປ** 1:11–20.

**ອະບິນາໄດ.** *ເບິ່ງ* ຕາຍເພາະຄວາມເຊື່ອ, ການຕາຍເພາະຄວາມເຊື່ອ *ນຳອີກ*

ສາດສະດາຊາວນີໄຟ ໃນພຣະຄຳພີມໍມອນ.

ໄດ້ທຳນາຍວ່າ ພຣະເຈົ້າຈະລົງໂທດຜູ້ຄົນຂອງກະສັດໂນອາທີ່ຊົ່ວຮ້າຍ ຍົກເວັ້ນແຕ່ພວກເຂົາໄດ້ກັບໃຈ, **ມຊຍ** 11:20–25. ໄດ້ຖືກເອົາເຂົ້າຄຸກ ເພາະການທຳນາຍເຖິງຄວາມພິນາດຂອງກະສັດໂນອາ ແລະ ຜູ້ຄົນຂອງເພິ່ນ, **ມຊຍ** 12:1–17. ໄດ້ສອນປະໂລຫິດທີ່ຊົ່ວຮ້າຍຂອງກະສັດໂນອາເຖິງກົດຂອງໂມເຊ ແລະ ກົດຂອງພຣະຄຣິດ, **ມຊຍ** 12–16. ແອວມາຜູ້ເປັນບິດາ ໄດ້ເຊື່ອ ແລະ ໄດ້ຂຽນຖ້ອຍຄຳຂອງເພິ່ນໄວ້, **ມຊຍ** 17:2–4. ໄດ້ຖືກເຜົາຈົນເຖິງແກ່ຄວາມຕາຍໂດຍກະສັດໂນອາ, **ມຊຍ** 17:20.

**ອະໄພ, ໃຫ້ອະໄພ.** *ເບິ່ງ* ກັບໃຈ, ການກັບໃຈ; ສາລະພາບ, ການສາລະພາບ; ຊົດໃຊ້, ການຊົດໃຊ້; ປົດບາບ, ການປົດບາບ *ນຳອີກ*

ດັ່ງທີ່ໃຊ້ໃນພຣະຄຳພີ, ທີ່ຈະໃຫ້ອະໄພ ໂດຍທົ່ວໄປແລ້ວມີຄວາມໝາຍຢູ່ສອງຢ່າງ: (1) ເມື່ອພຣະເຈົ້າໃຫ້ອະໄພແກ່ມະນຸດ, ພຣະອົງຈະລົບລ້າງ ຫລື ຍົກເລີກການຮຽກຮ້ອງໃຫ້ລົງໂທດເພາະບາບ. ຜ່ານການຊົດໃຊ້ຂອງພຣະຄຣິດ, ການອະໄພບາບຈຶ່ງມີໃຫ້ສຳລັບທຸກຄົນທີ່ກັບໃຈ, ຍົກເວັ້ນແຕ່ຜູ້ທີ່ຜິດຖານຄາດຕະກຳ ຫລື ບາບທີ່ອະໄພໃຫ້ບໍ່ໄດ້ເພາະການປະຕິເສດພຣະວິນຍານບໍລິສຸດ. (2) ເມື່ອຜູ້ຄົນໃຫ້ອະໄພກັນແລະກັນ, ເຂົາຈະປະຕິບັດຕໍ່ກັນດ້ວຍຄວາມຮັກເໝືອນດັ່ງພຣະຄຣິດ ແລະ ບໍ່ມີຄວາມຄິດທີ່ບໍ່ດີຕໍ່ຄົນທີ່ເຮັດຜິດຕໍ່ເຂົາ (ມທ 5:43–45; 6:12–15; ລກ 17:3–4; 1 ນຟ 7:19–21).

ພຣະຜູ້ເປັນເຈົ້າບໍ່ຮ້າຍງ່າຍ, ແລະ ມີຄວາມ

ຮັກອັນໝັ້ນຄົງ, ທັງໃຫ້ອະໄພແກ່ຄວາມຊົ່ວຮ້າຍ ແລະ ການກະບົດຕໍ່ສູ້ເຮົາ, **ຈບຊ** 14:18. ເຖິງແມ່ນວ່າບາບຂອງໝູ່ເຈົ້ານັ້ນເປັນສີແດງ ແຕ່ເຮົາກໍຈະຊຳລະໃຫ້ຂາວສະອາດດັ່ງນວນຝ້າຍ, **ອຊຢ** 1:18.

ຂໍຈົ່ງໂຜດຍົກໂທດໃຫ້ຂ້ານ້ອຍ, ເໝືອນຂ້ານ້ອຍຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້ານ້ອຍນັ້ນ, **ມທ** 6:12 (ລກ 11:4; 3 ນຟ 13:11). ບຸດມະນຸດມີສິດອຳນາດທີ່ຈະອະໄພບາບກຳ, **ມທ** 9:6 (ມທ 18:35; ມຣກ 2:10; ລກ 5:20–24). ຖ້າພີ່ນ້ອງຂອງຂ້ານ້ອຍເຮັດຜິດຕໍ່ຂ້ານ້ອຍ, ຂ້ານ້ອຍຕ້ອງຍົກໂທດໃຫ້ລາວຈັກເທື່ອ, **ມທ** 18:21–22 (ຄພ 98:40). ຜູ້ໃດກໍຕາມທີ່ເວົ້າໝິ່ນປະໝາດຕໍ່ສູ້ພຣະວິນຍານບໍລິສຸດຈະບໍ່ໄດ້ຮັບການອະໄພຈັກເທື່ອ, **ມຣກ** 3:29 (ແອວ 39:6). ຖ້າພີ່ນ້ອງເຮັດຜິດບາບ ແລະ ກັບໃຈ, ຈົ່ງຍົກໂທດໃຫ້ລາວ, **ລກ** 17:3. ພຣະບິດາເຈົ້າເອີຍ ໂຜດຍົກໂທດໃຫ້ພວກເຂົາດ້ວຍເຖີດ, ເພາະພວກເຂົາບໍ່ຮູ້ຈັກວ່າພວກເຂົາກຳລັງເຮັດຫຍັງ, **ລກ** 23:34.

ຈົ່ງອະທິຖານເພື່ອຂໍການໃຫ້ອະໄພ, **1 ນຟ** 7:21. ໂປດໃຊ້ໂລຫິດທີ່ຊົດໃຊ້ຂອງພຣະຄຣິດເພື່ອພວກຂ້ານ້ອຍຈະໄດ້ຮັບການໃຫ້ອະໄພຈາກບາບຂອງພວກຂ້ານ້ອຍ, **ມຊຢ** 4:2. ຖ້າຫາກເຂົາສາລະພາບບາບຢູ່ຕໍ່ໜ້າເຈົ້າ ແລະ ຕໍ່ໜ້າເຮົາ, ແລະ ກັບໃຈ, ແລ້ວເຈົ້າຈົ່ງໃຫ້ອະໄພແກ່ເຂົາ, **ມຊຢ** 26:29–31.

ຄົນທີ່ກັບໃຈ ແລະ ເຮັດຕາມພຣະບັນຍັດຈະໄດ້ຮັບການໃຫ້ອະໄພ, **ຄພ** 1:32. ຈົ່ງຍື່ນກ່ຽວຂອງເຈົ້າອອກມາ, ແລະ ບາບຂອງເຈົ້າໄດ້ຖືກອະໄພໃຫ້ແລ້ວ, **ຄພ** 31:5 (ຄພ 84:61). ຄົນໃດທີ່ກັບໃຈຈາກບາບຂອງເຂົາ, ຄົນໆນັ້ນໄດ້ຮັບການໃຫ້ອະໄພ, ແລະ ເຮົາ, ພຣະຜູ້ເປັນເຈົ້າ, ບໍ່ຈື່ຈຳມັນອີກເລີຍ, **ຄພ** 58:42. ເຮົາຈະໃຫ້ອະໄພຜູ້ທີ່ເຮົາຈະໃຫ້ອະໄພ, ແຕ່ພວກເຈົ້າຖືກຮຽກຮ້ອງໃຫ້ອະໄພມະນຸດທັງປວງ, **ຄພ** 64:10. ຕາບໃດທີ່ພວກເຈົ້າໃຫ້ອະໄພການລ່ວງລະເມີດຂອງພວກເຈົ້າແກ່ກັນແລະກັນສັນໃດ, ແມ່ນແຕ່ສັນນັ້ນ, ເຮົາ, ພຣະຜູ້ເປັນເຈົ້າ, ຈະໃຫ້ອະໄພແກ່ພວກເຈົ້າ, **ຄພ** 82:1. ຜູ້ທີ່ເຮົາຮັກ ເຮົາຈະຕີສອນດ້ວຍ ເພື່ອວ່າບາບຂອງພວກເຂົາຈະໄດ້ຮັບການໃຫ້ອະໄພ, **ຄພ** 95:1.

ເຮົາໄດ້ໃຫ້ອະໄພແກ່ເຈົ້າ ສຳລັບການລ່ວງລະເມີດຂອງເຈົ້າ, **ມຊ** 6:53.

**ອະມະຕະ, ຄວາມເປັນອະມະຕະ.** *ເບິ່ງ* ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ຊົດໃຊ້, ການຊົດໃຊ້; ພຣະເຢຊູຄຣິດ; ມະຕະ, ຄວາມເປັນມະຕະ; ລອດ, ຄວາມລອດ *ບຳອີກ*

ສະພາບຂອງການມີຊີວິດຢູ່ຕະຫລອດການໃນສະພາວະທີ່ໄດ້ຟື້ນຄືນຊີວິດແລ້ວ, ບໍ່ຂຶ້ນກັບຄວາມຕາຍທາງຮ່າງກາຍ.

ພຣະອົງເປັນຄືນມາແລ້ວ, **ມຣກ** 16:6. ຄົນທັງປວງກໍຈະຖືກບັນດານໃຫ້ມີຊີວິດ ເພາະກ່ຽວເນື່ອງກັບພຣະຄຣິດສັນນັ້ນ, **1 ກຣທ** 15:22. ສະພາບຊຶ່ງຕ້ອງເປື່ອຍເນົ່າຕ້ອງຖືກປ່ຽນແປງສູ່ສະພາບທີ່ບໍ່ເປື່ອຍເນົ່າຈັກເທື່ອ, **1 ກຣທ** 15:53–54. ພຣະເຢຊູໄດ້ກຳຈັດລິດແຫ່ງຄວາມຕາຍ ແລະ ໄດ້ເປີດເຜີຍຢ່າງຈະແຈ້ງເຖິງຊີວິດອັນຕາຍບໍ່ໄດ້, **2 ຕມທ** 1:10.

ຄວາມເປັນອະມະຕະຄືການກັບຄືນເຂົ້າຫາກັນຂອງວິນຍານ ແລະ ຮ່າງກາຍ, **2 ນຟ** 9:13. ວິນຍານກັບຮ່າງກາຍຮ່ວມເຂົ້າຫາກັນກາຍເປັນອະມະຕະ, ບໍ່ຕາຍອີກຈັກເທື່ອ, **ແອວ** 11:45.

ຄົນທີ່ຊື່ສັດຈະໄດ້ສວມມົງກຸດດ້ວຍຄວາມເປັນອະມະຕະ ແລະ ຊີວິດນິລັນດອນ, **ຄພ** 75:5. ແຜ່ນດິນໂລກຈະຢູ່ໃນສະພາບທີ່ບໍລິສຸດ ແລະ ອະມະຕະ, **ຄພ** 77:1 (ຄພ 130:9).

ວຽກງານ ແລະ ລັດສະໝີພາບຂອງພຣະເຈົ້າຄືການກໍ່ໃຫ້ເກີດຄວາມເປັນອະມະຕະ ແລະ ຊີວິດນິລັນດອນຂອງມະນຸດ, **ມຊ** 1:39.

**ອະມາລີໄຄຢາ**

ໃນພຣະຄຳພີມໍມອນ, ຊາວນີໄຟຄົນໜຶ່ງທີ່ທໍລະຍົດ ຜູ້ມີອຳນາດໃນບັນດາຊາວເລມັນ ແລະ ໄດ້ນຳພາພວກເຂົາມາເຮັດເສິກກັບຊາວນີໄຟ (ແອວ 46–51).

**ອັກຄະສາວົກ.** *ເບິ່ງ* ສານຸສິດ; ເປີດເຜີຍ, ການເປີດເຜີຍ *ນຳອີກ*

ໃນ ພາ ສາ ກຣີກ, ອັກ ຄະ ສາ ວົກ ໝາຍ ເຖິງ "ຜູ້ຖືກສົ່ງໄປ." ເປັນຕຳແໜ່ງທີ່ພຣະເຢຊູໄດ້ ມອບໃຫ້ແກ່ອັກຄະສາວົກສິບສອງ ຜູ້ທີ່ພຣະ ອົງໄດ້ເລືອກ ແລະ ໄດ້ແຕ່ງຕັ້ງໃຫ້ເປັນສານຸ ສິດທີ່ໃກ້ຊິດທີ່ສຸດ ແລະ ເປັນຜູ້ຊ່ວຍລະຫວ່າງ ການປະຕິບັດສາດສະໜາກິດຂອງພຣະອົງ ຢູ່ເທິງແຜ່ນດິນໂລກ (ລກ 6:13; ຢຮ 15:16). ພຣະອົງໄດ້ສົ່ງເຂົາເຈົ້າໄປ ເພື່ອເປັນຕົວແທນ ໃຫ້ແກ່ພຣະອົງ ແລະ ໃຫ້ປະຕິບັດແທນພຣະ ອົງຫລັງຈາກ ພຣະອົງໄດ້ສະເດັດຂຶ້ນສະຫວັນ. ທັງໃນ ສະ ໄໝ ບູຮານ ແລະ ໃນກຸ່ມອັກຄະ ສາວົກສິບສອງ ໃນສາດສະໜາຈັກທີ່ໄດ້ຮັບ ການຟື້ນຟູໃນວັນເວລານີ້, ອັກຄະສາວົກເປັນ ພະຍານພິເສດຂອງພຣະເຢຊູຄຣິດຕະຫລອດ ທົ່ວ ໂລກ ເພື່ອເປັນພະຍານເຖິງຄວາມເປັນ ພຣະເຈົ້າຂອງພຣະອົງ ແລະ ເຖິງການຟື້ນຄືນ ພຣະຊົນຂອງພຣະອົງຈາກຄວາມຕາຍ (ກຈກ 1:22; ຄພ 107:23).

ສາດສະໜາຈັກຂອງພຣະຄຣິດໄດ້ຖືກສ້າງ ຂຶ້ນເທິງພື້ນຖານຂອງອັກຄະສາວົກ ແລະ ສາດ ສະດາ, **ອຟຊ** 2:20; 4:11.

ລີໄຮ ແລະ ນີໄຟໄດ້ເຫັນອັກຄະສາວົກສິບ ສອງຕິດຕາມພຣະເຢຊູລົງມານຳກັນ, **1 ນຟ** 1:10; 11:34. ອັກຄະສາວົກເປັນຜູ້ຕັດສິນເຊື້ອ ສາຍອິດສະຣາເອນ, **ມມ** 3:18.

ຜູ້ທີ່ບໍ່ເອົາໃຈໃສ່ຕໍ່ຖ້ອຍຄຳຂອງສາດສະດາ ແລະ ອັກຄະສາວົກ ຈະຖືກຕັດອອກ, **ຄພ** 1:14 (3 ນຟ 12:1). ການເອີ້ນ ແລະ ພາລະກິດຂອງ ອັກຄະສາວົກສິບສອງໄດ້ຖືກເປີດເຜີຍ, **ຄພ** 18:26–36. ໂຈເຊັບ ສະມິດ ໄດ້ຖືກແຕ່ງຕັ້ງ ເປັນອັກຄະສາວົກ, **ຄພ** 20:2; 21:1. ອັກຄະ ສາວົກເປັນພະຍານພິເສດເຖິງພຣະນາມ ຂອງພຣະຄຣິດ ແລະ ຖືຂໍກະແຈຂອງການ ປະຕິບັດສາດສະໜາກິດ, **ຄພ** 27:12 (ຄພ 112:30–32). ອັກຄະສາວົກສິບສອງເປັນກຸ່ມ ທີ່ມີສິດອຳນາດເທົ່າທຽມກັບຝ່າຍປະທານສູງ ສຸດ, **ຄພ** 107:23–24. ອັກຄະສາວົກສິບສອງ ເປັນສະພາສູງເຄື່ອນທີ່ຄວບຄຸມ, **ຄພ** 107:33. ອັກຄະສາວົກຖືຂໍກະແຈຂອງວຽກງານເຜີຍ ແຜ່, **ຄພ** 107:35. ໜ້າທີ່ບາງຢ່າງຂອງອັກຄະ ສາວົກໄດ້ຖືກບັນຍາຍໄວ້, **ຄພ** 107:58. ເຮົາ ກ່າວກັບອັກຄະສາວົກສິບສອງຄົນ: ຈົ່ງຕິດ ຕາມເຮົາມາ, ແລະ ລ້ຽງດູແກະຂອງເຮົາ, **ຄພ** 112:14–15.

ພວກເຮົາເຊື່ອໃນອັກຄະສາວົກ, **ຫຼຊ** 1:6.

*ການ ເລືອກ ອັກຄະ ສາວົກ:* ອັກຄະສາວົກ ໄດ້ຖືກເລືອກໂດຍພຣະຜູ້ເປັນເຈົ້າ (ຢຮ 6:70; 15:16).

ພຣະ ເຢຊູໄດ້ເລືອກເອົາອັກຄະສາວົກສິບ ສອງຈາກບັນດາສານຸສິດຂອງພຣະອົງ, **ລກ** 6:13–16. ມັດທາຍໄດ້ຖືກເລືອກໃຫ້ເປັນ ອັກຄະສາວົກ, **ກຈກ** 1:21–26.

ອໍລີເວີ ຄາວເດີຣີ ແລະ ເດວິດ ວິດເມີ ຖືກ ບັນຊາໃຫ້ຊອກຫາອັກຄະສາວົກສິບສອງ, **ຄພ** 18:37–39.

**ອັກຄະສາວົກສິບສອງ, ກຸ່ມ.** *ເບິ່ງ* ອັກຄະ ສາວົກ

**ອັກຄະທູດ.** *ເບິ່ງ* ມີຄາເອນ; ອາດາມ *ນຳອີກ*

ມີຄາເອນ, ຫລື ອາດາມ, ແມ່ນ ອັກຄະທູດ ຫລື ຫົວໜ້າທູດ.

ພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກ ສະຫວັນ ດ້ວຍສຽງຮ້ອງອັນດັງ, ສຽງ ຂອງ ອັກຄະທູດ, **1 ທສ** 4:16. ມີຄາເອນແມ່ນ ອັກຄະທູດ, **ຢດ** 1:9 (ຄພ 29:26; 88:112; 128:20–21).

**ອັກຄຣິປາ.** *ເບິ່ງ* ໂປໂລ *ນຳອີກ*

ໃນພຣະຄຳພີໃໝ່, ລູກຊາຍຂອງເຮໂຣດ ອັກຄຣິປາ ທີໜຶ່ງ ແລະ ອ້າຍຂອງເບນີເກ ແລະ ດູຊີນລາ. ເພິ່ນເປັນກະສັດແຫ່ງຊານຊິດ, ຕັ້ງ ຢູ່ໃນເລບານອນ. ເພິ່ນໄດ້ຟັງອັກຄະສາວົກ ໂປໂລ ແລະ ເກືອບຖືກຊັກຈູງໃຫ້ກາຍເປັນຄົນ ຄຣິດສະຕຽນ (ກຈກ 25–26; ຈສ—ປ 1:24).

**ອັດຊີເຣຍ**

ຈັກກະພົບໃນສະໄໝບູຮານ, ພ້ອມດ້ວຍບາ ບີໂລນຄູ່ແຂ່ງຂອງຈັກກະພັດ, ປົກຄອງແຂວງ

ເກົ່າ ແກ່ ຢ່າງ ຫລວງ ຫລາຍ ຂອງ ຊີ ເຣຍ ແລະ ຟີລິດສະຕິນຕະຫລອດເກືອບທຸກສະໄໝຂອງ ພຣະຄຳພີເດີມ. ເຖິງແມ່ນວ່າຊາວອັດເຊເຣຍ ໄດ້ເປັນພະລັງອັນສຳຄັນນັບ ແຕ່ກາງສັດຕະ ວັດທີ 12 ກ່ອນ ຄ.ສ. ຈົນ ເຖິງປາຍ ສັດຕະ ວັດທີ 7 ກ່ອນ ຄ.ສ., ແຕ່ພວກເຂົາກໍຍັງບໍ່ສາ ມາດສ້າງໂຄງຮ່າງທາງການ ເມືອງທີ່ໝັ້ນຄົງ ໄດ້. ພວກເຂົາປົກຄອງດ້ວຍວິທີຂົ່ມເຫັງ, ປາບ ສັດຕູດ້ວຍໄຟ ແລະ ດາບ ຫລື ຕັດກຳລັງຂອງ ພວກເຂົາດ້ວຍການຍ້າຍພົນລະ ເມືອງຢ່າງ ຫລວງຫລາຍໄປຫາສ່ວນອື່ນໆຂອງຈັກກະພົບ ຂອງພວກເຂົາ. ປະຊາຊົນທີ່ຢູ່ໃຕ້ກົດບັງຄັບ ຂອງຊາວອັດຊີເຣຍ ໄດ້ຕໍ່ສູ້ກັບຈັກກະພົບຢູ່ ເລື້ອຍໆ. (ເບິ່ງ 2 ກສ 18–19; 2 ຂຄ 32; ອຊຢ 7:17–20; 10; 19; 37.)

**ອັນເດອາ**

ໃນ ພຣະ ຄຳ ພີ ໃໝ່, ນ້ອງຊາຍຂອງຊີໂມນ ເປໂຕ ແລະ ໜຶ່ງໃນອັກຄະສາວົກສິບສອງຄົນ ທີ່ພຣະເຢຊູໄດ້ເອີ້ນໃນລະຫວ່າງການປະຕິບັດ ສາດສະໜາກິດໃນຊ່ວງມະຕະຂອງພຣະອົງ (ມທ 4:18–19; ມຣກ 1:16–18, 29).

**ອັນນາ.** *ເບິ່ງ* ກາຍະຟາ *ນຳອີກ*

ໃນ ພຣະ ຄຳ ພີ ໃໝ່, ຊາຍຄົນ ໜຶ່ງທີ່ມີອິດ ທິ ພົນ ຫລາຍ ໃນ ສານ ຊານ ເຮດຣິນ. ເມື່ອ ພຣະ ເຢຊູຖືກຈັບ, ທຳອິດ ໄດ້ຖືກພາໄປຫາ ເພິ່ນກ່ອນ (ຢຮ 18:13); ເພິ່ນກໍມີສ່ວນທີ່ສຳ ຄັນນຳອີກໃນຄະດີຂອງອັກຄະສາວົກ (ກຈກ 4:3–6).

**ອັບປະໂຫຍດ, ຄວາມອັບປະໂຫຍດ.** *ເບິ່ງ* ຄວາມຕາຍທາງວິນຍານ; ນະລົກ; ບຸດແຫ່ງ ຄວາມຈິບຫາຍ; ມານ *ນຳອີກ*

ສະພາບ ທີ່ ຖືກ ຢຸດ ຢັ້ງບໍ່ ໃຫ້ກ້າວໜ້າ ແລະ ຖືກປະຕິເສດບໍ່ໃຫ້ເຂົ້າຫາທີ່ປະທັບຂອງພຣະ ເຈົ້າ ແລະ ລັດສະໝີພາບຂອງພຣະອົງ. ຄວາມ ອັບປະໂຫຍດມີຢູ່ໃນຫລາຍລະດັບທີ່ແຕກຕ່າງ ກັນ. ທຸກຄົນທີ່ບໍ່ ໄດ້ຮັບຄວາມສົມບູນ ແຫ່ງ ຄວາມສູງສົ່ງຂອງຊັ້ນສູງ ໃນບາງລະດັບຈະ ຖືກກຳນົດໃນຄວາມກ້າວໜ້າ ແລະ ສິດທິພິ ເສດຂອງເຂົາ, ແລະ ເຂົາຈະອັບປະໂຫຍດເຖິງ ຂັ້ນນັ້ນ.

ວິບັດແກ່ເຈົ້າຄົນໜ້າຊື່ໃຈຄົດ! ພວກເຈົ້າຈະ ໄດ້ຮັບຄວາມອັບປະໂຫຍດຫລາຍກວ່າ, **ມທ** 23:14. ຜູ້ໃດກໍຕາມທີ່ເວົ້າໝິ່ນປະໝາດຕໍ່ສູ້ ພຣະວິນຍານບໍລິສຸດ ຈະຢູ່ໃນຂັ້ນອັນຕະລາຍ ແຫ່ງຄວາມອັບປະໂຫຍດນິລັນດອນ, **ມຣກ** 3:29. ຄົນທີ່ເຮັດການຊົ່ວຈະອອກມາສູ່ການ ຟື້ນຄືນຊີວິດທີ່ອັບປະໂຫຍດ, **ຢຮ** 5:29 (3 ນຟ 26:5). ຜູ້ກິນ ແລະ ດື່ມໂດຍບໍ່ມີຄ່າຄວນ, ກໍກິນ ແລະ ດື່ມເປັນເຫດໃຫ້ຕົນຖືກພິພາກສາລົງ ໂລດ, **1 ກຣທ** 11:29 (3 ນຟ 18:28–29).

ຄົນທີ່ບໍ່ກັບໃຈ, ຮັບບັບຕິສະມາ, ແລະ ອົດ ທົນ ຈົນ ເຖິງທີ່ສຸດ ຈະ ຕ້ອງ ອັບ ປະ ໂຫຍດ, **2 ນຟ** 9:24 (ມຣກ 16:16; ອທ 4:18; ຄພ 68:9; 84:74). ຄົນຊົ່ວຈະທຸກທໍລະມານໃຈ ທີ່ ຈະຢູ່ກັບພຣະເຈົ້າຍິ່ງກວ່າກັບຈິດວິນຍານທີ່ ອັບປະໂຫຍດໃນນະລົກ, **ມມ** 9:4.

ຄົນໃດທີ່ບໍ່ເຮັດຫຍັງເລີຍຈົນກວ່າເຂົາຖືກ ບັນຊາໃຫ້ເຮັດ, ຄົນໆນັ້ນຍ່ອມອັບປະໂຫຍດ, **ຄພ** 58:29. ຄົນທີ່ໄດ້ຮັບພັນທະສັນຍາໃໝ່ ແລະ ເປັນນິດ ຈະປະຕິບັດຕາມກົດ, ຖ້າບໍ່ດັ່ງ ນັ້ນ ເຂົາຈະອັບປະໂຫຍດ, **ຄພ** 132:6.

**ອັບຣາມ.** *ເບິ່ງ* ອັບຣາຮາມ

**ອັບຣາຮາມ.** *ເບິ່ງ* ພັນທະສັນຍາຂອງອັບຣາ ຮາມ *ນຳອີກ*

ລູກຊາຍຂອງເຕຣາ, ເກີດໃນເມືອງອູເຣແຫ່ງ ເຄນເດຍ (ປຖກ 11:26, 31; 17:5). ສາດສະ ດາຂອງພຣະຜູ້ເປັນເຈົ້າ ຜູ້ຊຶ່ງພຣະຜູ້ເປັນເຈົ້າ ໄດ້ເຮັດພັນທະສັນຍານິລັນດອນໄວ້ກັບເພິ່ນ, ຊຶ່ງ ໂດຍຜ່ານ ເພິ່ນ ປະ ຊາຊາດທັງປວງຂອງ ແຜ່ນດິນໂລກຈະໄດ້ຮັບພອນ. ຊື່ດັ້ງເດີມຂອງ ອັບຣາຮາມແມ່ນ ອັບຣາມ.

ໄດ້ຍ້າຍໄປຢູ່ເມືອງຮາຣານ, ບ່ອນທີ່ເຕຣາ ໄດ້ຕາຍໄປ, **ປຖກ** 11:31–32 (ອຣຣ 2:1–5). ໄດ້ຖືກເອີ້ນໂດຍພຣະເຈົ້າເພື່ອໃຫ້ເດີນທາງ ໄປຫາການາອານ ແລະ ເພື່ອຮັບພັນທະສັນ ຍາແຫ່ງສະຫວັນ, **ປຖກ** 12:1–8 (ອຣຣ 2:4, 15–17). ໄດ້ເດີນທາງໄປປະເທດເອຢິບ, **ປຖກ**

12:9–20 (ອຮຮ 2:21–25). ໄດ້ຕັ້ງຖິ່ນຖານຢູ່ເຮັບໂຣນ, **ປຖກ** 13:18. ໄດ້ຊ່ວຍກູ້ຊີວິດຂອງໂລດ, **ປຖກ** 14:1–16. ໄດ້ພົບກັບ ເມນ ຄີ ເສເດັກ, **ປຖກ** 14:18–20. ນາງຮາກາໄດ້ເກີດລູກຊາຍໃຫ້ເພິ່ນຊື່ ອິດຊະມາເອນ, **ປຖກ** 16:15–16. ຊື່ຂອງເພິ່ນໄດ້ຖືກປ່ຽນເປັນ ອັບຣາຮາມ, **ປຖກ** 17:5. ພຣະຜູ້ເປັນເຈົ້າໄດ້ບອກອັບຣາຮາມ ແລະ ນາງຊາຣາ ວ່າເຂົາເຈົ້າຈະມີລູກຊາຍ, **ປຖກ** 17:15–22; 18:1–14. ນາງຊາຣາໄດ້ເກີດ ລູກ ຊາຍ ໃຫ້ ເພິ່ນ ຊື່ ອີຊາກ, **ປຖກ** 21:2–3. ໄດ້ຖືກບັນຊາໃຫ້ຖວາຍອີຊາກ, **ປຖກ** 22:1–18. ນາງຊາຣາໄດ້ຕາຍໄປ ແລະ ຖືກຝັງໄວ້, **ປຖກ** 23:1–2, 19. ອັບຣາຮາມໄດ້ຕາຍໄປ ແລະ ຖືກຝັງໄວ້, **ປຖກ** 25:8–10.

ຄວາມເຕັມໃຈຂອງອັບຣາຮາມທີ່ຈະຖວາຍອີຊາກເປັນລັກສະນະດຽວກັນກັບພຣະເຈົ້າຖວາຍພຣະບຸດອົງດຽວທີ່ຖືກຳເນີດຂອງພຣະອົງ, **ຢຄ** 4:5. ໄດ້ຈ່າຍສ່ວນສິບໃຫ້ແກ່ເມນຄີເສເດັກ, **ແອວ** 13:15. ໄດ້ເຫັນລ່ວງໜ້າ ແລະ ໄດ້ເປັນພະຍານເຖິງການສະເດັດມາຂອງພຣະຄຣິດ, **ຮລມ** 8:16–17.

ໄດ້ຮັບຖານະປະໂລຫິດຈາກເມນຄີເສເດັກ, **ຄພ** 84:14. ຄົນຊື່ສັດກາຍເປັນເຊື້ອສາຍຂອງອັບຣາຮາມ, **ຄພ** 84:33–34 (ຄລຕ 3:27–29). ໄດ້ຮັບທຸກສິ່ງທັງປວງໂດຍການເປີດເຜີຍ ແລະ ໄດ້ຮັບຄວາມສູງສົ່ງຂອງເພິ່ນ, **ຄພ** 132:29.

ໄດ້ສະແຫວງຫາພອນຂອງບັນພະບຸລຸດ ແລະ ການມອບໝາຍສູ່ຖານະປະໂລຫິດ, **ອຮຮ** 1:1–4. ໄດ້ຖືກປະໂລຫິດປອມແຫ່ງເຄນເດຍຂົ່ມເຫັງ, **ອຮຮ** 1:5–15. ໄດ້ຖືກໄວ້ຊີວິດໂດຍພຣະຜູ້ເປັນເຈົ້າ, **ອຮຮ** 1:16–20. ໄດ້ຮຽນຮູ້ກ່ຽວກັບດວງຕາເວັນ, ດວງເດືອນ, ແລະ ດວງດາວ, **ອຮຮ** 3:1–14. ໄດ້ຮຽນຮູ້ກ່ຽວກັບຊີວິດກ່ອນເກີດ ແລະ ການສ້າງ, **ອຮຮ** 3:22–28.

*ໜັງສືອັບຣາຮາມ:* ເປັນບັນທຶກບູຮານທີ່ຖືກຂຽນໄວ້ໂດຍອັບຣາຮາມ ຊຶ່ງກາຍເປັນກຳມະສິດຂອງສາດສະໜາຈັກໃນປີ 1835. ບັນທຶກດັ່ງກ່າວ ແລະ ສົບທີ່ອາບຢາຈຳນວນໜຶ່ງໄດ້ຖືກຄົ້ນພົບເຫັນຢູ່ໃນຫ້ອງຝັງສົບໃຕ້ດິນຢູ່ປະເທດເອຢິບ ໂດຍແອນໂທນີໂອ ເລໂບໂລ, ຜູ້ໄດ້ເຮັດພີໄນກຳມອບໃຫ້ແກ່ໄມໂກ ແຊນເລີ. ທ່ານແຊນເລີໄດ້ຈັດສະແດງມັນໃນສະຫະລັດອາເມຣິກາໃນປີ 1835. ໝູ່ເພື່ອນຈຳນວນໜຶ່ງຂອງໂຈເຊັບ ສະມິດ ໄດ້ຊື້ມັນຈາກທ່ານແຊນເລີ ແລະ ໄດ້ມອບມັນໃຫ້ແກ່ສາດສະດາ, ຜູ້ໄດ້ແປມັນ. ປະຈຸບັນນີ້ ຈຳນວນໜຶ່ງຂອງບັນທຶກນີ້ມີຢູ່ໃນພຣະຄຳພີໄຂ່ມຸກອັນລ້ຳຄ່າ.

ບົດທີ 1 ບັນທຶກປະສົບການຂອງອັບຣາຮາມຢູ່ໃນເມືອງອູເຣແຫ່ງເຄນເດຍ, ບ່ອນທີ່ປະໂລຫິດທີ່ຊົ່ວຮ້າຍ ໄດ້ພະຍາຍາມຂ້າເພິ່ນເປັນເຄື່ອງຖວາຍ. ບົດທີ 2 ບອກເຖິງການເດີນທາງຂອງເພິ່ນໄປຫາການາອານ. ພຣະຜູ້ເປັນເຈົ້າໄດ້ມາປະກົດຕໍ່ເພິ່ນ ແລະ ໄດ້ເຮັດພັນທະສັນຍາກັບເພິ່ນ. ບົດທີ 3 ບັນທຶກວ່າອັບຣາຮາມໄດ້ເຫັນ ຈັກກະວານ ແລະ ຮູ້ຈັກຄວາມສຳພັນຂອງດາວພະເຄາະຕ່າງໆໃນຟ້າສະຫວັນ. ບົດທີ 4–5 ເປັນບັນທຶກອີກເຫລັ້ມໜຶ່ງຂອງການສ້າງ.

*ເຊື້ອສາຍຂອງອັບຣາຮາມ:* ຜູ້ທີ່ໄດ້ຮັບຄຳສັນຍາ ແລະ ພັນທະສັນຍາຕ່າງໆ ຊຶ່ງພຣະເຈົ້າໄດ້ເຮັດໄວ້ກັບອັບຣາຮາມ ໂດຍການເຊື່ອຟັງກົດ ແລະ ພິທີການແຫ່ງພຣະກິດຕິຄຸນຂອງພຣະເຢຊູຄຣິດ. ຊາຍ ແລະ ຍິງ ສາມາດຮັບພອນເຫລົ່ານີ້ ຖ້າຫາກເຂົາເປັນທາຍາດໂດຍແທ້ຂອງອັບຣາຮາມ ຫລື ຖ້າຫາກເຂົາໄດ້ຖືກຮັບເຂົ້າຢູ່ໃນຄອບຄົວຂອງອັບຣາຮາມ ໂດຍການຮັບເອົາພຣະກິດຕິຄຸນ ແລະ ຮັບບັບຕິສະມາ (ຄລຕ 3:26–29; 4:1–7; ຄພ 84:33–34; 103:17; 132:30–32; ອຮຮ 2:9–11). ຜູ້ສືບຕະກຸນໂດຍແທ້ຂອງອັບຣາຮາມ ອາດສູນເສຍພອນຈາກການບໍ່ເຊື່ອຟັງ (ຣມ 4:13; 9:6–8).

**ອາຊາ**

ໃນພຣະຄຳພີເດີມ, ກະສັດອົງທີສາມແຫ່ງຢູດາ. ພຣະຄຳພີບັນທຶກວ່າ "ເພິ່ນກໍຍັງຊື່ສັດຕໍ່ພຣະຜູ້ເປັນເຈົ້າຕະຫລອດຊົ່ວຊີວິດຂອງເພິ່ນ" (1 ກສ 15:14). ໃນສະໄໝການປົກຄອງຂອງເພິ່ນ, ເພິ່ນໄດ້ເຮັດໃຫ້ກອງທັບຂອງເພິ່ນມີພະລັງຫລາຍ, ໄດ້ໂຍນແອກຂອງຊາວເອທີ

ໂອເປຍ ຖິ້ມ, ໄດ້ກຳ ຈັດ ຮູບ ບູຊາ ທັງ ໝົດ ຖິ້ມ, ແລະ ໄດ້ ເຊື້ອ ເຊີນ ຜູ້ ຄົນ ໃຫ້ ເຮັດ ພັນທະ ສັນຍາທີ່ ຈະ ສະແຫວງ ຫາ ພຣະ ເຢ ໂຮວາ (1 ກສ 15–16; 2 ຂຄ 14–16). ເຖິງ ຢ່າງ ໃດ ກໍ ຕາມ, ເມື່ອ ເພິ່ນ ເປັນ ພະຍາດ ທີ່ ຕີນ ຂອງ ເພິ່ນ, ເພິ່ນບໍ່ໄດ້ສະແຫວງຫາຂໍໃຫ້ພຣະຜູ້ເປັນເຈົ້າຊ່ວຍເຫລືອເພິ່ນ ແລະ ໄດ້ຕາຍໄປ (1 ກສ 15:23–24; 2 ຂຄ 16:12–13).

**ອາເຊ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ນຳອີກ*

ໃນ ພຣະ ຄຳ ພີ ເດີມ, ລູກ ຊາຍ ຂອງ ຢາ ໂຄບ ກັບ ນາງ ສີລະປາ, ສາວ ໃຊ້ ຂອງ ນາງ ເລອາ (ປຖກ 30:12–13).

*ເຜົ່າ ຂອງ ອາ ເຊ:* ຢາ ໂຄບ ໄດ້ ອວຍ ພອນ ອາເຊ (ປຖກ 49:20), ແລະ ໂມເຊ ໄດ້ ອວຍ ພອນ ເຊື້ອ ສາຍ ຂອງ ອາເຊ (ພບຍ 33:1, 24–29). ເຊື້ອສາຍເຫລົ່ານັ້ນຖືກເອີ້ນວ່າ "ທະຫານທີ່ມີຊື່ສຽງດີ" (1 ຂຄ 7:40).

**ອາດາມ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ມີຄາເອນ; ອັກຄະທູດ; ອາດາມ-ອອນໄດ-ອາມັນ; ເອເດນ; ເອວາ *ນຳອີກ*

ມະນຸດ ຄົນ ທຳອິດທີ່ ໄດ້ ຖືກ ສ້າງ ຂຶ້ນ ຢູ່ ໃນ ໂລກ.

ອາ ດາມ ແມ່ນ ບິດາ ແລະ ປິ ຕຸ ຂອງ ມະນຸດ ຊາດ ຢູ່ ເທິງ ແຜ່ນ ດິນ ໂລກ. ການ ລ່ວງ ລະເມີດ ຂອງ ລາວ ຢູ່ ໃນ ສວນ ເອ ເດນ (ປ ຖກ 3; ຄພ 29:40–42; ມຊ 4) ເຮັດ ໃຫ້ ລາວ ຕ້ອງ "ຕົກ" ແລະ ກາຍ ເປັນ ມະຕະ, ຊຶ່ງ ເປັນ ຂັ້ນ ຕອນ ທີ່ ຈຳ ເປັນ ກ່ອນ ມະນຸດ ຊາດ ຈະ ຈະ ເລີນ ກ້າວ ໜ້າ ຢູ່ ເທິງ ໂລກ ນີ້ (2 ນຟ 2:14–29; ແອວ 12:21–26). ສະນັ້ນ ອາດາມ ແລະ ເອວາ ຈຶ່ງ ຄວນ ໄດ້ ຮັບ ກຽດ ສຳລັບ ບົດບາດ ຂອງ ເຂົາ ເຈົ້າ ໃນ ການ ເຮັດ ໃຫ້ ຄວາມ ເຕີບ ໂຕ ນິລັນ ດອນ ຂອງ ເຮົາ ເປັນ ໄປ ໄດ້. ອາດາມ ໃນ ສະ ໄໝ ບູຮານ ແລະ ໃນ ທຸກ ວັນ ນີ້ ເປັນ ທີ່ ຮູ້ ຈັກ ກັນ ວ່າ ມີຄາເອນ (ດນອ 7; ຄພ 27:11; 107:53–54; 116; 138:38). ເພິ່ນເປັນອັກຄະທູດ (ຄພ 107:54) ແລະ ຈະມາສູ່ໂລກອີກໃນຖານະເປັນປິຕຸຂອງຄອບຄົວມະນຸດ (ຄພ 116).

ພຣະເຈົ້າໄດ້ສ້າງມະນຸດໃນຮູບຮ່າງລັກສະນະຂອງພຣະອົງເອງ, **ປຖກ** 1:26–28 (ມຊ 2:26–28; ອຣຮ 4:26–28). ພຣະເຈົ້າໄດ້ມອບສິດໃຫ້ມະນຸດຄອບຄອງເໜືອທຸກສິ່ງທັງປວງ ແລະ ໄດ້ບັນຊາເຂົາໃຫ້ມີລູກເຕົ້າມາກຫລາຍຈົນເຕັມແຜ່ນດິນໂລກ, **ປຖກ** 1:28–31 (ມຊ 2:28–31; ອຣຮ 4:28–31). ພຣະເຈົ້າໄດ້ວາງອາດາມ ແລະ ເອວາ ໄວ້ໃນສວນເອເດນ ແລະ ໄດ້ສັ່ງຫ້າມເຂົາເຈົ້າບໍ່ໃຫ້ກິນໝາກໄມ້ຈາກຕົ້ນທີ່ເຮັດໃຫ້ຮູ້ຈັກຄວາມດີ ແລະ ຮູ້ຈັກຄວາມຊົ່ວ, **ປຖກ** 2:7–9, 15–17 (ມຊ 3:7–9, 15–17; ອຣຮ 5:7–13). ອາດາມໄດ້ຕັ້ງຊື່ໃຫ້ສັດທຸກຊະນິດທີ່ມີຊີວິດ, **ປຖກ** 2:19–20 (ມຊ 3:19–20; ອຣຮ 5:20–21). ອາດາມ ແລະ ເອວາໄດ້ແຕ່ງງານກັນໂດຍພຣະເຈົ້າ, **ປຖກ** 2:18–25 (ມຊ 3:18–25; ອຣຮ 5:14–21). ອາດາມ ແລະ ເອວາ ໄດ້ຖືກຊາຕານລໍ້ລວງ, ໄດ້ກິນໝາກໄມ້ທີ່ຕ້ອງຫ້າມ, ແລະ ໄດ້ຖືກໄລ່ອອກຈາກສວນເອເດນ, **ປຖກ** 3 (ມຊ 4). ອາດາມມີອາຍຸໄດ້ 930 ປີ ຕອນລາວໄດ້ຕາຍໄປ, **ປຖກ** 5:5 (ມຊ 6:12).

ອາດາມເປັນມະນຸດຄົນທຳອິດ, **ຄພ** 84:16. ກ່ອນ ລາວຕາຍ ອາດາມໄດ້ ເອີ້ນລູກຫລານທີ່ຊອບທຳຂອງລາວໃຫ້ໄປເຕົ້າໂຮມກັນຢູ່ທີ່ອາດາມ-ອອນໄດ-ອາມັນ ແລະ ໄດ້ອວຍພອນພວກເຂົາ, **ຄພ** 107:53–57.

ອາດາມໄດ້ຖວາຍເຄື່ອງບູຊາ, **ມຊ** 5:4–8. ອາດາມໄດ້ຮັບບັບຕິສະມາ, ໄດ້ຮັບພຣະວິນຍານບໍລິສຸດ, ແລະ ໄດ້ຖືກແຕ່ງຕັ້ງສູ່ຖານະປະໂລຫິດ, **ມຊ** 6:51–68.

**ອາດາມ-ອອນໄດ-ອາມັນ.** *ເບິ່ງ* ອາດາມ *ນຳອີກ*

ສະຖານ ທີ່ ທີ່ ອາດາມ ໄດ້ ອວຍ ພອນ ລູກຫລານທີ່ຊອບທຳຂອງລາວ ສາມປີກ່ອນລາວ ໄດ້ ຕາຍ ໄປ (ຄພ 107:53–56) ແລະ ເປັນ ສະຖານທີ່ ທີ່ລາວຈະກັບຄືນມາຫາອີກກ່ອນການສະເດັດມາຄັ້ງທີສອງ (ຄພ 116).

**ອານາ**

ໃນ ພຣະ ຄຳ ພີ ໃໝ່, ຍິງໝໍທຳນາຍຄົນໜຶ່ງ

ຂອງ ເຜົ່າ ອາ ເຊ. ໃນ ເວລາ ການ ກຳເນີດ ຂອງ ພຣະ ເຢຊູ, ນາງ ເປັນ ແມ່ ໝ້າຍ ທີ່ ແກ່ ຊະ ລາ ຫລາຍ ແລ້ວ. ນາງໄດ້ເຫັນພຣະກຸມມານນ້ອຍ ເຢຊູ ຕອນພຣະອົງຖືກພາ ໄປຖວາຍ ໃນພຣະ ວິຫານ ແລະ ໄດ້ຮັບຮູ້ວ່າ ພຣະອົງເປັນພຣະຜູ້ ໄຖ່ (ລກ 2:36–38).

**ອານາຈັກຂອງພຣະເຈົ້າ ຫລື ອານາຈັກ ສະຫວັນ.** *ເບິ່ງ* ສາດສະໜາຈັກຂອງພຣະ ເຢຊູຄຣິດ; ລັດສະໝີພາບຂອງຊັ້ນສູງ *ນຳ ອີກ*

ອາ ນາ ຈັກ ຂອງ ພຣະ ເຈົ້າ ຢູ່ ເທິງ ແຜ່ນ ດິນ ໂລກ ແມ່ນ ສາດ ສະ ໜາ ຈັກ ຂອງ ພຣະ ເຢຊູ ຄຣິດ ແຫ່ງ ໄພ່ພົນຍຸກສຸດທ້າຍ (ຄພ 65). ຈຸດ ປະສົງ ຂອງສາດ ສະ ໜາ ຈັກ ແມ່ນ ເພື່ອຕຽມ ສະມາຊິກໃຫ້ມີຊີວິດ ຕະຫລອດ ການ ໃນອາ ນາຈັກ ຊັ້ນສູງ ຫລື ອານາຈັກ ສະຫວັນ. ເຖິງ ຢ່າງໃດກໍຕາມ, ບາງເທື່ອພຣະຄຳພີເອີ້ນສາດ ສະໜາຈັກ ວ່າເປັນອານາຈັກສະຫວັນ, ໝາຍ ຄວາມ ວ່າ ສາດ ສະ ໜາ ຈັກ ເປັນ ອາ ນາ ຈັກ ສະຫວັນຢູ່ເທິງແຜ່ນດິນໂລກ.

ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງ ໄພ່ພົນຍຸກສຸດທ້າຍເປັນອານາຈັກຂອງພຣະ ເຈົ້າຢູ່ເທິງແຜ່ນດິນໂລກ, ແຕ່ໃນເວລານີ້ ມັນ ຖືກກຳນົດໃຫ້ເປັນອານາຈັກຝ່າຍສາດສະໜາ ເທົ່ານັ້ນ. ໃນໄລຍະພັນປີ, ອານາຈັກຂອງພຣະ ເຈົ້າຈະ ເປັນທັງຝ່າຍການ ເມືອງ ແລະ ຝ່າຍ ສາດສະໜາ.

ພ ຣ ະ ຜູ້ ເປັນ ເຈົ້າ ຄື ກະສັດ ສືບ ໄປ, **ພສສ** 10: 1 6 (ພ ສສ 11 :4). ພຣະ ເຈົ້າ ແຫ່ງ ຟ້າ ສະຫວັນຈະຕັ້ງອານາຈັກໜຶ່ງຂຶ້ນ ຊຶ່ງຈະບໍ່ສູນ ຫາຍໄປຈັກເທື່ອ, **ດນອ** 2:44 (ຄພ 138:44).

ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ສາ ເພາະວ່າອາ ນາຈັກ ສະຫວັນ ມາ ໃກ້ ແລ້ວ, **ມທ** 3:2 (ມທ 4:17). ຂໍໃຫ້ອານາຈັກຂອງພຣະອົງມາຕັ້ງຢູ່, **ມທ** 6:10. ແຕ່ກ່ອນອື່ນໝົດ ເຈົ້າທັງຫລາຍ ຈົ່ງສະແຫວງຫາອານາຈັກຂອງພຣະເຈົ້າ, **ມທ** 6:33 (3 ນຟ 13:33). ເຮົາຈະມອບຂໍກະແຈ ຂອງອານາຈັກໃຫ້ເຈົ້າ, **ມທ** 16:19. ຈົ່ງມາ ຮັບເອົາອານາຈັກຊຶ່ງໄດ້ຖືກຈັດຕຽມໄວ້ສຳລັບ ພວກເຈົ້າ, **ມທ** 25:34. ຈົນກວ່າວັນນັ້ນມາເຖິງ ທີ່ເຮົາຈະຮັບສິນລະລຶກກັບພວກເຈົ້າໃນອາ ນາຈັກແຫ່ງພຣະບິດາຂອງເຮົາ, **ມທ** 26:26–29. ພວກເຈົ້າຈະເຫັນສາດສະດາທຸກຄົນໃນ ອານາຈັກຂອງພຣະເຈົ້າ, **ລກ** 13:28. ຄົນຊົ່ວ ຊ້າອະທຳຈະບໍ່ມີສ່ວນໃນອານາຈັກຂອງພຣະ ເຈົ້າ, **1 ກຣທ** 6:9. ສິ່ງທີ່ເປັນເນື້ອໜັງ ແລະ ເລືອດ ຈະມີສ່ວນໃນອານາຈັກຂອງພຣະເຈົ້າ ບໍ່ໄດ້, **1 ກຣທ** 15:50.

ກ່ອນທີ່ພວກທ່ານຈະຊອກຫາຄວາມຮັ່ງມີ ນັ້ນ ພວກທ່ານຄວນຊອກຫາອານາຈັກຂອງ ພຣະເຈົ້າກ່ອນ, **ຢຄ** 2:18. ສິ່ງທີ່ບໍ່ສະອາດຈະ ບໍ່ໄດ້ຮັບອານາຈັກສະຫວັນເປັນມູນມໍລະດົກ ໄດ້ເລີຍ, **ແອວ** 11:37.

ເຈົ້າຈະ ໄດ້ພັກຜ່ອນນຳ ເຂົາໃນອານາຈັກ ຂອງພຣະບິດາຂອງເຮົາ, **ຄພ** 15:6. ພວກເຈົ້າ ໄດ້ຮັບອານາຈັກແລ້ວ ຫລື ຂໍກະແຈຂອງສາດ ສະໜາຈັກໄດ້ຖືກມອບໃຫ້ແລ້ວ, **ຄພ** 42:69 (ຄພ 65:2). ຂໍໃຫ້ອານາຈັກຂອງພຣະເຈົ້າຈົ່ງ ຂະຫຍາຍອອກໄປ ເພື່ອວ່າອານາຈັກສະຫວັນ ຈະມາ, **ຄພ** 65:5–6. ຂໍກະແຈແຫ່ງອານາຈັກ ຈະບໍ່ຖືກເອົາໄປຈາກເຈົ້າ, **ຄພ** 90:3. ຄົນໃດ ທີ່ຮັບເອົາເຈົ້າດັ່ງເດັກນ້ອຍໆ, ກໍໄດ້ຮັບເອົາອາ ນາຈັກຂອງເຮົາ, **ຄພ** 99:3. ດັ່ງນັ້ນ ສາດສະ ໜາຈັກຂອງເຮົາຈະຖືກເອີ້ນໃນຍຸກສຸດທ້າຍ, ແມ່ນແຕ່ສາດສະໜາຈັກຂອງພຣະເຢຊູຄຣິດ ແຫ່ງໄພ່ພົນຍຸກສຸດທ້າຍ, **ຄພ** 115:4. ສະຫວັນ ໄດ້ເປີດ, ແລະ ຂ້າພະເຈົ້າໄດ້ເຫັນອານາຈັກ ຊັ້ນສູງຂອງພຣະເຈົ້າ, **ຄພ** 137:1–4.

**ອານໄທ-ນີໄຟ-ລີໄຮ.** *ເບິ່ງ* ໂມໄຊຢາ, ພວກ ລູກຊາຍຂອງ; ອຳໂມນ, ລູກຊາຍຂອງໂມ ໄຊຢາ; ຮີລາມັນ, ພວກລູກຊາຍຂອງ *ນຳ ອີກ*

ໃນພຣະຄຳພີມໍມອນ, ຊື່ທີ່ມອບໃຫ້ແກ່ຊາວ ເລມັນ ຜູ້ທີ່ໄດ້ປ່ຽນໃຈເຫລື້ອມໃສໂດຍພວກ ລູກຊາຍ ຂອງ ໂມ ໄຊຢາ. ຫລັງຈາກການປ່ຽນ ໃຈເຫລື້ອມໃສຂອງເຂົາເຈົ້າ, ຜູ້ຄົນເຫລົ່ານີ້, ຜູ້ ທີ່ຖືກເອີ້ນວ່າຜູ້ຄົນຂອງອຳໂມນນຳອີກ, ໄດ້ດຳ ລົງຊີວິດຢ່າງຊື່ສັດຕະຫລອດຊີວິດຂອງເຂົາ ເຈົ້າ (ແອວ 23:4–7, 16–17; 27:20–27).

ພວກເຂົາໄດ້ຮັບຊື່ວ່າ ອານໄທ-ນີໄຟ-ລີໄຮ, **ແອວ** 23:16–17; 24:1. ພວກເຂົາໄດ້ປະຕິເສດທີ່ຈະນອງເລືອດ ແລະ ໄດ້ຝັງອາວຸດຂອງພວກເຂົາໄວ້, **ແອວ** 24:6–19. ພວກລູກຊາຍຂອງພວກເຂົາໄດ້ຕຽມພ້ອມສຳລັບສົງຄາມ ແລະ ໄດ້ເລືອກເອົາຮີລາມັນໃຫ້ເປັນຜູ້ນຳຂອງພວກເຂົາ, **ແອວ** 53:16–19; 56–58 (ພວກລູກຊາຍເຫລົ່ານີ້ກໍຖືກຮູ້ຈັກກັນວ່ານັກຮົບໜຸ່ມ 2,000 ຄົນນຳອີກ).

**ອານາເນຍແຫ່ງດາມັສກັດ.** *ເບິ່ງ* ໂປໂລ *ນຳອີກ*

ສານຸສິດຄົນໜຶ່ງທີ່ເປັນຄົນຄຣິດສະຕຽນທີ່ດາມັສກັດ ຜູ້ໄດ້ໃຫ້ບັບຕິສະມາແກ່ໂປໂລ (ກຈກ 9:10–18; 22:12).

**ອານາເນຍແຫ່ງເຢຣູຊາເລັມ**

ໃນພຣະຄຳພີໃໝ່, ລາວກັບເມຍຂອງລາວ, ຊະຟີຣາ, ໄດ້ຕົວະພຣະຜູ້ເປັນເຈົ້າ ໂດຍການເອົາເງິນສ່ວນໜຶ່ງມ້ຽນໄວ້ ຊຶ່ງເຂົາເຈົ້າໄດ້ອຸທິດໃຫ້ພຣະຜູ້ເປັນເຈົ້າແລ້ວ. ເມື່ອເປໂຕໄດ້ສອບຖາມເຂົາເຈົ້າ, ເຂົາເຈົ້າທັງສອງໄດ້ລົ້ມລົງ ແລະ ສິ້ນໃຈຕາຍ (ກຈກ 5:1–11).

**ອາເບັດເນໂກ.** *ເບິ່ງ* ດານີເອນ *ນຳອີກ*

ໃນພຣະຄຳພີເດີມ, ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ເປັນຊາຍໜຸ່ມຊາວອິດສະຣາເອນສາມຄົນ ຜູ້ຊຶ່ງພ້ອມດ້ວຍດານີເອນ, ໄດ້ຖືກພາໄປຫາວັງຂອງເນບູກາດເນັດສາ, ກະສັດແຫ່ງບາບີໂລນ. ຊື່ເຮັບເຣີຂອງອາເບັດເນໂກແມ່ນ ອາຊາຣີຢາ. ຊາຍໜຸ່ມສີ່ຄົນໄດ້ປະຕິເສດບໍ່ຍອມເຮັດໃຫ້ຕົນເອງເສື່ອມເສຍໂດຍການກິນຊີ້ນ ແລະ ດື່ມເຫລົ້າອະງຸ່ນຂອງກະສັດ (ດນອ 1). ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ຖືກກະສັດສັ່ງໃຫ້ໂຍນເຂົ້າເຕົາໄຟຮ້ອນ ແຕ່ພວກເຂົາໄດ້ຖືກຮັກສາໄວ້ ຢ່າງມະຫັດສະຈັນ (ດນອ 3).

**ອາເບັນ.** *ເບິ່ງ* ກາອິນ; ອາດາມ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຄົນໜຶ່ງຂອງອາດາມ ແລະ ເອວາ.

ໄດ້ຖວາຍເຄື່ອງບູຊາທີ່ດີກວ່າກາອິນ ອ້າຍຂອງລາວ ໃຫ້ແກ່ພຣະເຈົ້າ, **ປຖກ** 4:4–5 (ຮຣ 11:4; ມຊ 5:16–21). ໄດ້ຖືກຂ້າໂດຍກາອິນ, **ປຖກ** 4:8 (ມຊ 5:32).

ໄດ້ຮັບຖານະປະໂລຫິດຈາກອາດາມ, **ຄພ** 84:16.

ຊາຕານ ໄດ້ວາງແຜນກັບກາອິນ ເພື່ອຂ້າອາເບັນ, **ມຊ** 5:28–31 (ຮລມ 6:27).

**ອາພໍກະຣາຟາ.** *ເບິ່ງ* ພຣະຄຣິສຕະທຳຄຳພີ; ພຣະຄຳພີ *ນຳອີກ*

ໜັງສືທີ່ສັກສິດຂອງຊາວຢິວ ຊຶ່ງບໍ່ໄດ້ຮ່ວມຢູ່ໃນພຣະຄຣິສຕະທຳຄຳພີເຮັບເຣີ ແຕ່ມີບັນຈຸຢູ່ໃນພຣະຄຣິສຕະທຳຄຳພີຂອງສາດສະໜາຈັກຄຣິດສະຕຽນຕ່າງໆ. ໜັງສືເຫລົ່ານີ້ມີຄວາມສຳຄັນຫລາຍໃນການເຊື່ອມໂຍງພຣະຄຳພີເດີມ ແລະ ພຣະຄຳພີໃໝ່ເຂົ້າກັນ ແລະ ສາດສະໜາຈັກນັບຖືໜັງສືເຫລົ່ານີ້ວ່າເປັນປະໂຫຍດຫລາຍ.

ສ່ວນຫລາຍແລ້ວ ອາພໍກະຣາຟາ ກໍຖືກແປຢ່າງຖືກຕ້ອງ, **ຄພ** 91:1–3. ອາພໍກະຣາຟາ ສາມາດເປັນຜົນປະໂຫຍດໃຫ້ແກ່ຄົນທີ່ໄດ້ຮັບຄວາມສະຫວ່າງຈາກພຣະວິນຍານ, **ຄພ** 91:4–6.

**ອາມາເຄໂດນ.** *ເບິ່ງ* ການສະເດັດມາຄັ້ງທີສອງຂອງພຣະເຢຊູຄຣິດ; ໂກກ; ມາໂກກ *ນຳອີກ*

ຊື່ ອາມາເຄໂດນ ມີກົກເຄົ້າມາຈາກພາສາເຮັບເຣີ *ຮາ ເມກິດໂດ,* ໝາຍຄວາມວ່າ "ພູເມກິດໂດ." ຮ່ອມພູເມກິດໂດຕັ້ງຢູ່ໃນພາກຕາເວັນຕົກຂອງທົ່ງພຽງເອສະດາອີໂລນ, ຫ້າສິບໄມ (ແປດສິບ ກິໂລແມັດ) ຢູ່ທາງເໜືອຂອງເຢຣູຊາເລັມ, ແລະ ແມ່ນສະຖານທີ່ສູ້ຮົບທີ່ສຳຄັນຫລາຍໃນສະໄໝຂອງພຣະຄຳພີເດີມ. ການສູ້ຮົບທີ່ຍິ່ງໃຫຍ່ ແລະ ສຸດທ້າຍຈະເກີດຂຶ້ນກ່ອນການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ ຈະຖືກເອີ້ນວ່າ ການສູ້ຮົບອາມາເຄໂດນ ເພາະວ່າມັນຈະເລີ່ມຕົ້ນໃນສະຖານທີ່ແຫ່ງດຽວກັນນີ້. (ອຊກ 39:11; ຊກຢ 12–14, ໂດຍສະເພາະ 12:11; ພນມ 16:14–21.)

**ອາແມນ.** *ເບິ່ງ* ອະທິຖານ, ການອະທິຖານ, ຄຳອະທິຖານ *ບຳອີກ*

ໝາຍເຖິງ "ຂໍໃຫ້ເປັນດັ່ງນັ້ນ" ຫລື "ຂໍໃຫ້ເປັນດັ່ງທີ່ກ່າວ." ອາແມນ ແມ່ນການກ່າວເພື່ອສະແດງຄວາມຈິງໃຈ ຫລື ການຮັບຮູ້ຢ່າງໜັກແໜ້ນ ແລະ ການເຫັນດ້ວຍ (ພບຍ 27:14–26) ຫລື ຄວາມເປັນຈິງ (1 ກສ 1:36). ທຸກວັນນີ້ ໃນທ້າຍຂອງຄຳອະທິຖານ, ປະຈັກພະຍານ, ແລະ ຄຳປາໄສ, ຜູ້ທີ່ໄດ້ຍິນຄຳອະທິຖານ ຫລື ຂ່າວສານ ຈະກ່າວອອກສຽງຄຳວ່າ ອາແມນ ເພື່ອສະແດງເຖິງການເຫັນດ້ວຍ ແລະ ການຍອມຮັບ.

ໃນສະໄໝຂອງພຣະຄຳພີເດີມ, ບຸກຄົນຈະກ່າວຄຳວ່າ ອາແມນ ເມື່ອເຮັດຄຳສາບານ (1 ຂຄ 16:7, 35–36; ນມຢ 5:12–13; 8:2–6). ພຣະຄຣິດໄດ້ຖືກເອີ້ນວ່າ "ອາແມນ, ພະຍານຜູ້ຊື່ສັດ ແລະ ຍຸດຕິທຳ" (ພນມ 3:14). ຄຳວ່າ ອາແມນ ຍັງຖືກໃຊ້ເປັນສັນຍາລັກຂອງພັນທະສັນຍາໃນໂຮງຮຽນຂອງສາດສະດານຳອີກ (ຄພ 88:133–135).

**ອາໂມດ**

ສາດສະດາຂອງພຣະຄຳພີເດີມ ຜູ້ໄດ້ທຳນາຍຈາກປະມານ 792 ປີ ເຖິງ 740 ປີ ກ່ອນ ຄ.ສ. ໃນວັນເວລາຂອງອຸດສີຢາ, ກະສັດແຫ່ງຢູດາ, ແລະ ເຢໂຣໂບອາມ, ກະສັດແຫ່ງອິດສະຣາເອນ.

*ພຣະທຳອາໂມດ:* ໜັງສືໃນພຣະຄຳພີເດີມ. ຄຳທຳນາຍຫລາຍຢ່າງຂອງອາໂມດ ເຕືອນຊາວອິດສະຣາເອນ ແລະ ປະຊາຊາດໃກ້ຄຽງໃຫ້ກັບຄືນສູ່ຄວາມຊອບທຳ.

ບົດທີ 1–5 ເອີ້ນຊາວອິດສະຣາເອນ ແລະ ປະຊາຊາດໃກ້ຄຽງໃຫ້ກັບໃຈ. ບົດທີ 3 ອະທິບາຍວ່າ ພຣະຜູ້ເປັນເຈົ້າເປີດເຜີຍຄວາມລັບຂອງພຣະອົງຕໍ່ສາດສະດາ ແລະ ວ່າເປັນເພາະການລ່ວງລະເມີດ, ຊາວອິດສະຣາເອນຈະຖືກຜູ້ປົ້ນລະປັກທຳລາຍ. ບົດທີ 6–8 ທຳນາຍເຖິງການຕົກຂອງຊາວອິດສະຣາເອນ ຫລາຍປີກ່ອນອັດຊີເຣຍເຂົ້າມາຮຸກຮານ. ບົດທີ 9 ທຳນາຍວ່າ ຊາວອິດສະຣາເອນຈະຖືກນຳຄືນສູ່ແຜ່ນດິນຂອງຕົນ.

**ອາມລິໄຊ, ຊາວອາມລິໄຊ**

ຊາຍຄົນໜຶ່ງໃນພຣະຄຳພີມໍມອນ ຜູ້ໄດ້ນຳພາຊາວນີໄຟກຸ່ມໜຶ່ງ ຜູ້ປາດຖະໜາຢາກມີກະສັດໃນຊ່ວງໄລຍະການປົກຄອງຂອງຜູ້ຕັດສິນ. ຊາວນີໄຟເຫລົ່ານີ້, ຖືກເອີ້ນວ່າ ຊາວອາມລິໄຊ, ໄດ້ກະບົດຕໍ່ຕ້ານພຣະເຈົ້າຢ່າງເປີດເຜີຍ, ຊຶ່ງໂດຍການນັ້ນພວກເຂົາຈຶ່ງໄດ້ຖືກສາບແຊ່ງ (ແອວ 2–3).

**ອາລະຟາ ແລະ ໂອເມຄາ.** *ເບິ່ງ* ພຣະເຢຊູຄຣິດ *ບຳອີກ*

ອາລະຟາ ແມ່ນອັກສອນຕົວທຳອິດໃນຕົວອັກສອນຂອງພາສາກຣີກ; ໂອເມຄາ ແມ່ນອັກສອນຕົວສຸດທ້າຍ. ມັນກໍເປັນຊື່ໜຶ່ງອີກສຳລັບພຣະເຢຊູຄຣິດ ແລະ ຖືກໃຊ້ເປັນເຄື່ອງໝາຍເພື່ອສະແດງວ່າ ພຣະຄຣິດເປັນທັງຕົ້ນ ແລະ ທີ່ສຸດ (ພນມ 1:8; ຄພ 19:1).

**ອາລົມຮ້າຍ.** *ເບິ່ງ* ຄຽດແຄ້ນ, ຄວາມຄຽດແຄ້ນ

**ອາໂຣນ, ລູກຊາຍຂອງໂມໄຊຢາ.** *ເບິ່ງ* ໂມໄຊຢາ, ພວກລູກຊາຍຂອງ; ໂມໄຊຢາ, ລູກຊາຍຂອງເບັນຢາມິນ *ບຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນໜຶ່ງຂອງກະສັດໂມໄຊຢາ. ອາໂຣນໄດ້ຮັບໃຊ້ເປັນຜູ້ສອນສາດສະໜາ ຜູ້ຊຶ່ງຄວາມພະຍາຍາມອັນພາກພຽນໄດ້ຊ່ວຍເຫລືອຫລາຍຄົນໃຫ້ປ່ຽນໃຈເຫລື້ອມໃສໃນພຣະຄຣິດ.

ເປັນຜູ້ບໍ່ເຊື່ອຖື ຜູ້ໄດ້ພະຍາຍາມທຳລາຍສາດສະໜາຈັກ, **ມຊຢ** 27:8–10, 34. ທູດອົງໜຶ່ງໄດ້ມາປະກົດຕໍ່ລາວ ແລະ ໝູ່ເພື່ອນຂອງລາວ, **ມຊຢ** 27:11. ໄດ້ກັບໃຈ ແລະ ເລີ່ມຕົ້ນສັ່ງສອນພຣະຄຳຂອງພຣະເຈົ້າ, **ມຊຢ** 27:32–28:8. ໄດ້ປະຕິເສດບໍ່ຂຶ້ນເປັນກະສັດ ແລະ ໄດ້ຂຶ້ນໄປຫາແຜ່ນດິນຂອງຊາວເລມັນ ເພື່ອສັ່ງສອນພຣະຄຳຂອງພຣະເຈົ້າ, **ແອວ** 17:6–9. ໄດ້ຖືສິນອົດເຂົ້າ ແລະ ໄດ້ອະທິຖານເພື່ອຂໍການນຳພາ, **ແອວ** 17:8–11. ໄດ້ສິດສອນບິດາຂອງກະສັດລາໂມໄນ, **ແອວ** 22:1–26. ໄດ້ໄປສັ່ງສອນຊາວໂຊຣຳ, **ແອວ** 31:6–7.

**ອາໂຣນ, ອ້າຍຂອງໂມເຊ.** *ເບິ່ງ* ຖານະປະໂລຫິດແຫ່ງອາໂຣນ; ໂມເຊ *ນຳອີກ*

ໃນພຣະຄຳພີເດີມ, ລູກ ຊາຍ ຄົນໜຶ່ງຂອງອຳຣາມກັບ ໂຢເກເບັດ, ຂອງເຜົ່າເລວີ (ອພຍ 6:16–20); ອ້າຍຂອງໂມເຊ (ອພຍ 7:7).

ໄດ້ ຖືກ ແຕ່ງ ຕັ້ງ ໂດຍພຣະ ຜູ້ເປັນ ເຈົ້າ ໃຫ້ຊ່ວຍ ໂມເຊນຳລູກຫລານຂອງອິດສະຣາເອນອອກຈາກເອຢິບ ແລະ ເປັນຜູ້ກ່າວແທນເພິ່ນ, **ອພຍ** 4:10–16, 27–31; 5:1–12:51. ຢູ່ເທິງພູຊີນາຍ, ໂມເຊໄດ້ຮັບຄຳແນະນຳກ່ຽວກັບການແຕ່ງຕັ້ງຂອງອາໂຣນ ແລະ ລູກຊາຍສີ່ຄົນຂອງເພິ່ນສູ່ຖານະປະໂລຫິດແຫ່ງອາໂຣນ, **ອພຍ** 28:1–4. ໄດ້ເຮັດງົວຄຳຕາມຄຳຂໍຮ້ອງຂອງຜູ້ຄົນ, **ອພຍ** 32:1–6, 21, 24, 35. ໄດ້ສິ້ນຊີວິດຢູ່ເທິງພູໂຮເຣ ຕອນມີອາຍຸໄດ້ 123 ປີ, **ຈບຊ** 20:22–29 (ຈບຊ 33:38–39).

ພຣະຜູ້ເປັນເຈົ້າໄດ້ຢືນຢັນຖານະປະໂລຫິດໃຫ້ແກ່ອາໂຣນ ແລະ ລູກຫລານຂອງເພິ່ນ, **ຄພ** 84:18, 26–27, 30. ຄົນທີ່ຂະຫຍາຍໜ້າທີ່ຖານະປະໂລຫິດກາຍເປັນລູກຫລານຂອງໂມເຊ ແລະ ຂອງອາໂຣນ, **ຄພ** 84:33–34.

**ອາຫານທິບແຫ່ງຊີວິດ.** *ເບິ່ງ* ສິນລະລຶກ; ພຣະເຢຊູຄຣິດ *ນຳອີກ*

ພຣະ ເຢຊູ ຄຣິດ ຄືອາຫານ ທິບ ແຫ່ງຊີວິດ. ເຂົ້າຈີ່ສຳລັບສິນລະລຶກເປັນຕົວແທນໃຫ້ແກ່ພຣະກາຍຂອງ ພຣະຄຣິດ.

ເຮົາເປັນອາຫານທິບແຫ່ງຊີວິດ, **ຢຣ** 6:33–58.

ກິນເຂົ້າ ແລະ ດື່ມນ້ຳແຫ່ງຊີວິດ, **ແອວ** 5:34. ເຂົ້າຈີ່ແມ່ນ ເພື່ອ ລະລຶກເຖິງພຣະ ກາຍ ຂອງພຣະຄຣິດ, **3 ນຟ** 18:5–7.

ເຂົ້າ ຈີ່ແມ່ນເຄື່ອງ ໝາຍ ເຖິງ ເນື້ອໜັງພຣະຄຣິດ, **ຄພ** 20:40, 77 (ມຣນ 4).

**ອາຮາບ.** *ເບິ່ງ* ເຢເຊເບນ *ນຳອີກ*

ໃນພຣະຄຳພີເດີມ, ເປັນກະສັດທີ່ຊົ່ວຮ້າຍທີ່ສຸດ ແລະ ມີອິດທິພົນຄົນໜຶ່ງຂອງອິດສະຣາເອນພາກ ເໜືອ. ເພິ່ນ ໄດ້ ແຕ່ງງານ ນຳເຢເຊເບນ, ເຈົ້າຍິງຂອງຊີໂດນ, ຜ່ານຜູ້ທີ່ນະມັດສະການພຣະບາອານ ແລະ ອັດຊະຕາກຈຶ່ງ ໄດ້ ຖືກ ສະຖາປະນາ ມັນຂຶ້ນ ໃນ ອິດສະຣາເອນ (1 ກສ 16:29–33; 2 ກສ 3:2) ແລະພະຍາຍາມເຊົາເຊື່ອສາດສະດາ ແລະ ເຊົານະມັດສະການພຣະເຢໂຮວາ (1 ກສ 18:13).

ໄດ້ປົກຄອງອິດສະຣາເອນໃນຊາມາເຣຍເປັນເວລາຊາວສອງປີ, **1 ກສ** 16:29 (1 ກສ 16–22). ເພິ່ນໄດ້ເຮັດບາບຕໍ່ສູ້ພຣະຜູ້ເປັນເຈົ້າຢ່າງຮ້າຍແຮງກວ່າຄົນໃດໆທີ່ປົກຄອງມາກ່ອນເພິ່ນ, **1 ກສ** 16:30. ໄດ້ຖືກຂ້າຢູ່ໃນການສູ້ຮົບ, **1 ກສ** 22:29–40.

**ອິດສະລະ, ອິດສະລະພາບ.** *ເບິ່ງ* ເສລີພາບ; ຊະເລີຍ, ການເປັນຊະເລີຍ; ອຳເພີໃຈ *ນຳອີກ*

ອຳນາດ ຫລື ຄວາມສາມາດທີ່ຈະເລືອກດ້ວຍຕົນເອງໂດຍບໍ່ຕ້ອງຖືກບີບບັງຄັບ. ໃນຄວາມຮູ້ສຶກທາງວິນຍານ, ບຸກຄົນທີ່ກັບໃຈ ແລະ ເຊື່ອຟັງພຣະປະສົງຂອງພຣະເຈົ້າຈະເປັນອິດສະລະຈາກຄວາມເປັນທາດຂອງບາບ ຜ່ານການຊົດໃຊ້ຂອງພຣະເຢຊູຄຣິດ (ມຊຍ 5:8).

ຄວາມຈິງຈະເຮັດໃຫ້ພວກເຈົ້າເປັນອິດສະລະ, **ຢຣ** 8:32. ຜູ້ທີ່ເປັນອິດສະລະຈາກບາບຈະໄດ້ຮັບຊີວິດນິລັນດອນ, **ຣມ** 6:19–23.

ກິ່ງງ່າອັນຊອບທຳຂອງເຊື້ອສາຍອິດສະຣາເອນຈະຖືກນຳອອກມາຈາກຄວາມເປັນຊະເລີຍໄປຫາອິດສະລະ, **2 ນຟ** 3:5. ພວກເຂົາໄດ້ຮ້ອງອອກມາເພື່ອທູນຂໍພຣະຜູ້ເປັນເຈົ້າ ເພື່ອອິດສະລະພາບຂອງພວກເຂົາ, **ແອວ** 43:48–50. ໂມໂຣໄນປິຕິຍິນດີໃນອິດສະລະພາບຂອງປະເທດຊາດຂອງຕົນ, **ແອວ** 48:11. ພຣະວິນຍານຂອງພຣະເຈົ້າເປັນພຣະວິນຍານແຫ່ງອິດສະລະພາບ, **ແອວ** 61:15.

ຈົ່ງຕາມເຮົາມາ, ແລະ ພວກເຈົ້າຈະເປັນຄົນອິດສະລະ, **ຄພ** 38:22.

**ອິດສະລະທີ່ຈະເລືອກ.** *ເບິ່ງ* ອຳເພີໃຈ

**ອິດສະຣາເອນ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອັບຣາຮາມ—ເຊື້ອສາຍຂອງອັບຣາຮາມ; ຮັບເອົາ, ການຮັບເອົາ *ນຳອີກ*

ພຣະ ຜູ້ ເປັນ ເຈົ້າ ໄດ້ ປະທານ ຊື່ ອິດສະ

ຣາເອນ ໃຫ້ ຢາໂຄບ, ລູກ ຊາຍ ຂອງ ອີ ຊາກ ແລະ ຫລານຊາຍຂອງອັບຣາຮາມ ໃນພຣະ ຄຳພີເດີມ (ປຖກ 32:28; 35:10). ຊື່ ອິດສະ ຣາເອນ ໝາຍ ເຖິງຕົວຂອງຢາໂຄບເອງ, ລູກ ຫລານຂອງເພິ່ນ, ຫລື ອານາຈັກຊຶ່ງລູກຫລານ ເຫລົ່ານັ້ນຄັ້ງໜຶ່ງເຄີຍຄອບຄອງໃນສະໄໝ ຂອງພຣະຄຳພີເດີມ (2 ຊມອ 1:24; 23:3). ຫລັງຈາກ ໂມເຊ ໄດ້ນຳພາລູກຫລານຂອງ ອິດສະຣາເອນອອກຈາກຄວາມເປັນທາດຢູ່ ເອຢິບແລ້ວ (ອພຍ 3–14), ພວກເຂົາຢູ່ໃນ ການປົກຄອງຂອງຜູ້ຕັດສິນ ເປັນເວລາຫລາຍ ກວ່າສາມຮ້ອຍປີ. ເລີ່ມຕົ້ນຈາກກະສັດໂຊນ, ບັນດາກະສັດໄດ້ປົກຄອງເໜືອອິດສະຣາເອນ ນຳກັນເປັນໜຶ່ງ ຈົນເຖິງການສິ້ນຊີວິດຂອງ ໂຊໂລໂມນ, ເມື່ອສິບເຜົ່າໄດ້ກໍ່ການກະບົດຕໍ່ ເຣໂຣໂບອາມ ເພື່ອສ້າງຕັ້ງປະຊາຊາດແຍກ ອອກຕ່າງຫາກ. ຫລັງຈາກອານາຈັກຂອງ ອິດສະຣາເອນໄດ້ຖືກແບ່ງແຍກ, ເຜົ່າທີ່ຢູ່ພາກ ເໜືອ, ຊຶ່ງເປັນສ່ວນທີ່ໃຫຍ່ກວ່າ, ໄດ້ຮັກສາຊື່ ອິດສະຣາເອນ ໄວ້, ໃນຂະນະທີ່ອານາຈັກຂອງ ພາກໃຕ້ຖືກເອີ້ນວ່າ ຢູດາ. ໃນປະຈຸບັນນີ້ແຜ່ນ ດິນການາອານຖືກເອີ້ນ ອິດສະຣາເອນ. ໃນ ຄວາມໝາຍໜຶ່ງອີກ, ອິດສະຣາເອນ ໝາຍເຖິງ ຜູ້ທີ່ເຊື່ອຢ່າງແທ້ຈິງໃນພຣະຄຣິດ (ຣມ 10:1; 11:7; ຄລຕ 6:16; ອຟຊ 2:12).

*ສິບສອງເຜົ່າຂອງອິດສະຣາເອນ:* ຢາໂຄບ ຫລານຊາຍຂອງອັບຣາຮາມ, ຊຶ່ງຊື່ໄດ້ປ່ຽນໄປ ເປັນ ອິດສະຣາເອນ, ໄດ້ມີລູກຊາຍຢູ່ດ້ວຍກັນ ສິບສອງຄົນ. ຕໍ່ມາລູກຫລານຂອງເຂົາເຈົ້າໄດ້ ກາຍເປັນສິບສອງເຜົ່າຂອງອິດສະຣາເອນ ຫລື ລູກຫລານຂອງອິດສະຣາເອນ. ຕໍ່ໄປນີ້ຄືລາຍ ຊື່ຂອງສິບສອງເຜົ່າ: ຣູເບັນ, ຊີເມໂອນ, ເລວີ, ຢູດາ, ອິດຊາຄາ, ແລະ ເສບູໂລນ (ລູກຊາຍ ຂອງຢາໂຄບກັບນາງເລອາ); ດານ ແລະ ເນັບ ທະລີ (ລູກຊາຍຂອງຢາໂຄບກັບນາງບິນຣາ); ກາດ ແລະ ອາເຊ (ລູກຊາຍຂອງຢາໂຄບກັບ ນາງສິລະປາ); ໂຢເຊັບ ແລະ ເບັນຢາມິນ (ລູກ ຊາຍຂອງຢາໂຄບກັບນາງລາເຊັນ) (ປຖກ 29:32–30:24; 35:16–18).

ຢາໂຄບໄດ້ໃຫ້ພອນແກ່ຜູ້ນຳຂອງແຕ່ລະ ເຜົ່າກ່ອນເພິ່ນຈະສິ້ນຊີວິດ (ປຖກ 49:1–28). ສຳລັບຂໍ້ມູນເພີ່ມເຕີມ, ເບິ່ງຊື່ລູກຊາຍແຕ່ລະ ຄົນຂອງຢາໂຄບ.

ຣູເບັນ, ລູກຊາຍກົກຂອງຢາໂຄບນຳເມຍ ຄົນທຳອິດ, ເລອາ, ໄດ້ສູນເສຍສິດທິຂອງອ້າຍ ກົກ ແລະ ມູນມໍລະດົກສອງເທົ່າຂອງລາວໄປ ເພາະການເຮັດຜິດສິນທຳ (ປຖກ 49:3–4). ສິດທິຂອງອ້າຍກົກນັ້ນໄດ້ໄປຕົກຢູ່ທີ່ໂຢເຊັບ, ຜູ້ເປັນລູກຊາຍກົກຂອງຢາໂຄບກັບເມຍຄົນ ທີສອງ, ລາເຊັນ (1 ຂຄ 5:1–2). ເລວີ, ພຣະ ຜູ້ເປັນເຈົ້າໄດ້ເລືອກເຜົ່າຂອງລາວໃຫ້ຮັບໃຊ້ ເປັນຜູ້ປະຕິບັດສາດສະໜາກິດຂອງຖານະ ປະໂລຫິດ, ບໍ່ໄດ້ຮັບມູນມໍລະດົກ ເພາະການ ເອີ້ນພິເສດຂອງພວກເຂົາໃນບັນດາເຜົ່າທັງ ໝົດ. ສິ່ງນີ້ໄດ້ເຮັດໃຫ້ມໍລະດົກສອງເທົ່າຂອງ ໂຢເຊັບ ຖືກແບ່ງປັນໃຫ້ແກ່ລູກຊາຍຂອງ ໂຢເຊັບ, ເອຟະຣາອິມ ແລະ ມານາເຊ (1 ຂຄ 5:1; ຢມຢ 31:9), ຜູ້ທີ່ຖືກນັບເປັນເຜົ່າໜຶ່ງອີກ ຕ່າງຫາກຂອງອິດສະຣາເອນ (ປຈສ, ປຖກ 48:5–6 [ພາກທ້ອຍທ້າຍ]).

ສະມາຊິກໃນເຜົ່າຂອງຢູດາຕ້ອງເປັນຜູ້ ປົກຄອງຈົນກວ່າພຣະເມຊີອາຈະສະເດັດ ມາ (ປຖກ 49:10; ປຈສ, ປຖກ 50:24 [ພາກ ທ້ອຍທ້າຍ]). ໃນຍຸກສຸດທ້າຍ ເຜົ່າຂອງເອຟະ ຣາອິມຈະໄດ້ຮັບສິດທິພິເສດໃນການນຳຂ່າວ ສານຂອງການຟື້ນຟູພຣະກິດຕິຄຸນໄປສູ່ໂລກ ແລະ ການເຕົ້າໂຮມອິດສະຣາເອນທີ່ກະຈັດ ກະຈາຍໄປ (ພບຍ 33:13–17). ເວລາຈະມາ ເຖິງ ເມື່ອເອຟະຣາອິມຈະມີບົດບາດເປັນຜູ້ນຳ ໃນການເຕົ້າໂຮມທຸກເຜົ່າຂອງອິດສະຣາເອນ ເຂົ້າກັນເປັນໜຶ່ງ ໂດຍຜ່ານພຣະກິດຕິຄຸນ ຂອງພຣະເຢຊູຄຣິດ (ອຊຢ 11:12–13; ຄພ 133:26–34).

*ການ ກະ ຈັດ ກະ ຈາຍ ຂອງ ຊາວ ອິດສະ ຣາເອນ:* ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ສິບສອງ ເຜົ່າຂອງອິດສະຣາເອນກະຈັດກະຈາຍໄປ ແລະ ເປັນທຸກ ເພາະຄວາມບໍ່ຊອບທຳ ແລະ ການກະບົດຂອງພວກເຂົາ. ເຖິງຢ່າງໃດກໍ ຕາມ, ພຣະຜູ້ເປັນເຈົ້າຍັງໄດ້ເຮັດໃຫ້ການກະ ຈັດກະຈາຍຂອງຜູ້ຄົນທີ່ຖືກເລືອກໄວ້ຂອງ

ພຣະອົງໃນບັນດາປະຊາຊາດຂອງໂລກ ເປັນພອນໃຫ້ແກ່ປະຊາຊາດເຫລົ່ານັ້ນ.

ເຮົາຈະກະຈັດກະຈາຍພວກເຈົ້າໄປຢູ່ໃນປະເທດຕ່າງໆ, **ລລວ** 26:33. ພຣະຜູ້ເປັນເຈົ້າຈະໃຫ້ພວກເຈົ້າກະຈັດກະຈາຍໄປໃນບັນດາຜູ້ຄົນທັງປວງ, **ພບຍ** 28:25, 37, 64. ຊົນຊາດທັງຫລາຍໃນໂລກຈະຕົກໃຈຢ້ານກົວໃນສິ່ງທີ່ພວກເຂົາເຫັນ, **ຢມຢ** 29:18–19. ເຮົາຈະຝັດຮ່ອນເຊື້ອສາຍອິດສະຣາເອນໃນທ່າມກາງຊົນຊາດທັງຫລາຍ, **ອມ** 9:9 (ຊກຢ 10:9).

ພຣະເຢຊູຖືກໃຊ້ມາຫາຝູງແກະທີ່ເສຍໄປໃນເຊື້ອສາຍອິດສະຣາເອນ, **ມທ** 15:24. ມີຝູງແກະອື່ນທີ່ເປັນຝູງແກະຂອງເຮົາ ແຕ່ບໍ່ຢູ່ໃນຝູງນີ້, **ຢຮ** 10:16.

ອິດສະຣາເອນຈະກະຈັດຈະກາຍໄປທົ່ວທຸກແຫ່ງຂອງຜືນແຜ່ນດິນໂລກ, **1 ນຟ** 22:3–8. ຢາໂຄບອ້າງເຖິງຖ້ອຍຄຳຂອງຊີນັດປຽບທຽບຕົ້ນໝາກກອກເທດ ແລະ ຕົ້ນໝາກກອກປ່າ, **ຢຄ** 5–6. ວຽກງານຂອງພຣະບິດາຈະເລີ່ມຕົ້ນໃນບັນດາເຜົ່າຕ່າງໆ ທີ່ແຕກກະຈັດກະຈາຍໄປ, **3 ນຟ** 21:26.

*ການເຕົ້າໂຮມຊາວອິດສະຣາເອນ:* ເຊື້ອສາຍອິດສະຣາເອນຈະຖືກເຕົ້າໂຮມເຂົ້າກັນໃນຍຸກສຸດທ້າຍ ກ່ອນການສະເດັດມາຂອງພຣະຄຣິດ (ຫຼຊ 1:10). ພຣະຜູ້ເປັນເຈົ້າເຕົ້າໂຮມອິດສະຣາເອນຜູ້ຄົນຂອງພຣະອົງ ເມື່ອພວກເຂົາຮັບເອົາພຣະອົງ ແລະ ຮັກສາພຣະບັນຍັດຂອງພຣະອົງ.

ພຣະອົງຈະເຮັດສັນຍານເອີ້ນເອົາຊາດໜຶ່ງທີ່ຢູ່ຫ່າງໄກ ແລະ ພວກເຂົາຈະມາ, **ອຊຢ** 5:26. ເຮົາຈະເອົາເຈົ້າຄືນດ້ວຍຄວາມຮັກອັນສຸດຊຶ້ງ, **ອຊຢ** 54:7. ປະຊາຊົນອິດສະຣາເອນ ແລະ ຢູດາ ຈະຖືກເຕົ້າໂຮມກັບຄືນສູ່ດິນແດນຂອງພວກເຂົາ, **ຢມຢ** 30:3. ພຣະຜູ້ເປັນເຈົ້າຈະນຳເຊື້ອສາຍອິດສະຣາເອນກັບຄືນມາຈາກຊົນຊາດຕ່າງໆ ທີ່ເຂົາໄດ້ຖືກກະຈັດຈະກາຍໄປ, **ອຊກ** 28:25.

ໃນຍຸກສະໄໝຂອງຄວາມສົມບູນແຫ່ງເວລາ ພຣະອົງຈະຮວບຮວມສິ່ງສາລະພັດໄວ້ໃນພຣະຄຣິດ, **ອຟຊ** 1:10.

ຫລັງຈາກຊາວອິດສະຣາເອນກະຈັດກະຈາຍໄປ, ພວກເຂົາຈະຖືກເຕົ້າໂຮມ, **1 ນຟ** 15:12–17. ພຣະຜູ້ເປັນເຈົ້າຈະເຕົ້າໂຮມຜູ້ຄົນທັງປວງທີ່ເປັນເຊື້ອສາຍອິດສະຣາເອນ, **1 ນຟ** 19:16 (3 ນຟ 16:5). ພວກເຂົາຈະຖືກນຳອອກຈາກຄວາມມືດ ແລະ ຮູ້ຈັກວ່າພຣະຜູ້ເປັນເຈົ້າຄືພຣະຜູ້ຊ່ວຍໃຫ້ລອດຂອງພວກເຂົາ, **1 ນຟ** 22:12. ພຣະເຈົ້າຈະເຕົ້າໂຮມ ແລະ ນັບຈຳນວນລູກໆຂອງພຣະອົງ, **1 ນຟ** 22:25. ປະເທດຂອງຄົນຕ່າງຊາດຈະນຳອິດສະຣາເອນໄປຫາແຜ່ນດິນອັນເປັນມູນມໍລະດົກຂອງພວກເຂົາ, **2 ນຟ** 10:8 (3 ນຟ 16:4). ຜູ້ຄົນຂອງເຮົາ ແລະ ຄຳເວົ້າຂອງເຮົາຈະຖືກເຕົ້າໂຮມໄວ້ເປັນຄຳດຽວກັນ, **2 ນຟ** 29:13–14.

ພວກແອວເດີໄດ້ຮັບການເອີ້ນໃຫ້ເຕົ້າໂຮມຜູ້ທີ່ຖືກເລືອກໄວ້, **ຄພ** 29:7 (ຄພ 39:11). ເຮົາຈະເຕົ້າໂຮມຜູ້ທີ່ຖືກເລືອກໄວ້ຂອງເຮົາ, **ຄພ** 33:6. ເຕົ້າໂຮມ ເພື່ອວ່າເຮົາຈະມອບກົດຂອງເຮົາໃຫ້ພວກເຈົ້າ ແລະ ພວກເຈົ້າຈະໄດ້ຮັບພອນ, **ຄພ** 38:31–33. ເຮົາຈະກູ້ຜູ້ຄົນຂອງເຮົາ ຊຶ່ງເປັນເຊື້ອສາຍອິດສະຣາເອນກັບຄືນມາ, **ຄພ** 39:11. ໄພ່ພົນຂອງພຣະເຈົ້າຈະອອກມາ, **ຄພ** 45:46. ໂມເຊໄດ້ມອບໝາຍຂໍກະແຈແຫ່ງການເຕົ້າໂຮມ, **ຄພ** 110:11.

ຄວາມຊອບທຳ ແລະ ຄວາມຈິງຈະກວາດແຜ່ນດິນໂລກ ແລະ ເຕົ້າໂຮມຜູ້ທີ່ພຣະຜູ້ເປັນເຈົ້າເລືອກໄວ້, **ມຊ** 7:62. ການເຕົ້າໂຮມຖືກປຽບທຽບໃສ່ກັບການເຕົ້າໂຮມຝູງແຮ້ງ ແລະ ຊາກສົບ, **ຈສ—ມ** 1:27.

*ສິບເຜົ່າທີ່ຫາຍໄປຂອງອິດສະຣາເອນ:* ສິບເຜົ່າຂອງອິດສະຣາເອນໄດ້ລວມກັນເປັນອານາຈັກພາກເໜືອຂອງອິດສະຣາເອນ ແລະ ໄດ້ຖືກພາໄປເປັນຊະເລີຍຢູ່ອັດຊີເຣຍ 721 ປີ ກ່ອນ ຄ.ສ. ໃນເວລານັ້ນ ພວກເຂົາໄດ້ໄປຫາ "ພາກພື້ນທາງເໜືອ" ແລະ ໄດ້ສາບສູນໄປ ບໍ່ມີໃຜຮູ້ຈັກ. ພວກເຂົາຈະກັບຄືນມາໃນຍຸກສຸດທ້າຍ.

ເຮົາຈະບອກທິດເໜືອປ່ອຍໃຫ້ເຂົາໄປ, **ອຊຢ** 43:6. ພວກເຂົາຈະມາຈາກດິນແດນຫ່າງໄກທິດເໜືອ, **ອຊຢ** 49:12 (1 ນຟ 21:12). ຢູດາຈະຮວບຮວມກັບອິດສະຣາເອນ ແລະ ເຂົາ

ຈະ ກັບ ຄືນ ມາ ຈາກ ຖິ່ນ ທາງ ທິດ ເໜືອ, **ຢມຢ** 3:18. ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ໄດ້ນຳລູກຫລານຂອງອິດສະຣາເອນອອກມາຈາກແຜ່ນດິນທາງທິດເໜືອ, **ຢມຢ** 16:14–16. ເຮົາຈະນຳ ເອົາເຂົາເຈົ້າ ມາຈາກທິດ ເໜືອ, **ຢມຢ** 31:8.

ຊາວນີໄຟ ແລະ ຊາວຢິວຈະມີຄຳເວົ້າຂອງເຜົ່າ ອິດ ສະ ຣາເອນ ທີ່ ສູນ ຫາຍ ໄປ, **2 ນຟ** 29:12–13. ເຮົາຈະໄປປະກົດຕົວຕໍ່ເຜົ່າອິດສະຣາເອນທີ່ຫາຍໄປ, **3 ນຟ** 17:4. ເມື່ອພຣະກິດຕິຄຸນຖືກສັ່ງສອນໃຫ້ແກ່ຜູ້ທີ່ເຫລືອຢູ່ຂອງເຊື້ອສາຍ ອິດ ສະ ຣາເອນ, ເຜົ່າທີ່ຫາຍ ໄປຈະຖືກເຕົ້າໂຮມຄືນສູ່ບ້ານ ສູ່ແຜ່ນດິນທີ່ເປັນມູນມໍລະດົກຂອງພວກເຂົາ, **3 ນຟ** 21:26–29.

ໂມເຊໄດ້ມອບໝາຍຂໍກະແຈແຫ່ງການເຕົ້າໂຮມຂອງຊາວອິດສະຣາເອນໃຫ້ແກ່ໂຈເຊັບສະມິດ ແລະ ອໍລິເວີ ຄາວເດີຣີ, **ຄພ** 110:11. ພວກເຂົາທີ່ຢູ່ໃນດິນແດນທາງເໜືອຈະມາຢູ່ໃນຄວາມຊົງຈຳຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ, **ຄພ** 133:26–32.

ພວກເຮົາເຊື່ອໃນການຮ່ວມກັນແທ້ໆຂອງເຊື້ອສາຍອິດສະຣາເອນ, **ຫຼຊ** 1:10.

**ອິດຊະມາເອນ, ພໍ່ເຖົ້າຂອງນີໄຟ.** *ເບິ່ງ* ລີໄຮ, ບິດາຂອງນີໄຟ *ບຳອີກ*

ຊາຍ ຄົນ ໜຶ່ງ ໃນ ພຣະ ຄຳ ພີມໍມອນ, ຜູ້ຊຶ່ງພ້ອມດ້ວຍຄອບຄົວຂອງລາວ, ໄດ້ເຂົ້າຮ່ວມເດີນທາງ ໄປກັບ ຄອບ ຄົວ ຂອງລີໄຮ ໄປຫາແຜ່ນດິນແຫ່ງຄຳສັນຍາ.

ນີໄຟ ແລະ ພວກອ້າຍ ຂອງລາວໄດ້ກັບຄືນໄປເຢຣູຊາເລັມ ແລະ ໄດ້ຊັກຊວນອິດຊະມາເອນ ພ້ອມດ້ວຍຄອບຄົວຂອງລາວ ໃຫ້ເດີນທາງໄປກັບຄອບຄົວຂອງລາວ ໄປຫາແຜ່ນດິນແຫ່ງຄຳສັນຍາ, **1 ນຟ** 7:2–5. ສອງຄອບຄົວໄດ້ກ່ຽວດອງກັນ, **1 ນຟ** 16:7. ອິດຊະມາເອນໄດ້ສິ້ນຊີວິດໃນຖິ່ນແຫ້ງແລ້ງກັນດານ, **1 ນຟ** 16:34.

**ອິດຊະມາເອນ, ລູກຊາຍຂອງອັບຣາຮາມ.** *ເບິ່ງ* ອັບຣາຮາມ; ຮາກາ *ບຳອີກ*

ໃນ ພຣະ ຄຳພີເດີມ, ລູກຊາຍ ຂອງອັບ ຣາຮາມກັບນາງຮາກາ, ສາວໃຊ້ຊາວເອຢິບຂອງນາງຊາຣາ (ປຖກ 16:11–16). ພຣະຜູ້ເປັນເຈົ້າໄດ້ສັນຍາກັບອັຣາຮາມ ແລະ ຮາກາວ່າອິດຊະມາເອນຈະກາຍເປັນບິດາຂອງປະຊາຊາດທີ່ຍິ່ງໃຫຍ່ (ປຖກ 21:8–21).

ພັນທະສັນຍາໄດ້ມາເຖິງຜ່ານທາງອີຊາກແທນທີ່ຈະເປັນຜ່ານທາງອິດຊະມາເອນ, **ປຖກ** 17:19–21 (ຄລຕ 4:22–5:1). ພຣະເຈົ້າໄດ້ອວຍພອນອິດຊະມາເອນວ່າ ລາວຈະມີລູກຫລາຍຄົນ, **ປຖກ** 17:20. ອິດຊະມາເອນໄດ້ຊ່ວຍຝັງອັບຣາຮາມ, **ປຖກ** 25:8–9. ລາຍຊື່ຂອງລູກຊາຍສິບສອງຄົນຂອງອິດສະມາເອນ, **ປຖກ** 25:12–16. ອິດຊະມາເອນໄດ້ຕາຍໄປ, **ປຖກ** 25:17–18. ເອຊາວໄດ້ເອົານາງມາຮາລາດ ລູກສາວຂອງອິດຊະມາເອນ ມາເປັນເມຍ, **ປຖກ** 28:9.

**ອິດສາ.** *ເບິ່ງ* ໂລບ, ຄວາມໂລບ; ຫຶງຫວງ, ຄວາມຫຶງຫວງ *ບຳອີກ*

ອີງຕາມພຣະຄຳພີ, ຄວາມປາດຖະໜາບາງສິ່ງທີ່ເປັນຂອງຄົນອື່ນເປັນສິ່ງທີ່ຜິດ.

ບັນພະບຸລຸດເຫລົ່ານັ້ນໄດ້ອິດສາໂຢເຊັບຈຶ່ງໄດ້ຂາຍເພິ່ນໄປປະເທດເອຢິບ, **ກຈກ** 7:9. ຄວາມຮັກບໍ່ ເຫິງ ສາ, **1 ກຣທ** 13:4 (ມຣນ 7:45). ຄວາມເຫິງສາກັນນຳໄປສູ່ໃຈດື້ດ້ານ, **1 ຕມທ** 6:4. ບ່ອນໃດທີ່ມີຄວາມອິດສາ, ບ່ອນນັ້ນກໍມີການວຸ້ນວາຍ ແລະ ມີການຊົ່ວຮ້າຍທຸກຊະນິດ, **ຢກບ** 3:16.

ພຣະຜູ້ເປັນເຈົ້າໄດ້ບັນຊາວ່າ ມະນຸດຈະບໍ່ອິດສາ, **2 ນຟ** 26:32. ບໍ່ມີຄວາມອິດສາໃນບັນດາຜູ້ຄົນຂອງນີໄຟ, **4 ນຟ** 1:15–18.

ຄວາມອິດສາ ແລະ ຄວາມໂມໂຫຮ້າຍຂອງມະນຸດເປັນໂຊກຊາຕາປົກກະຕິຂອງຂ້າພະເຈົ້າຕະຫລອດວັນເວລາຂອງຊີວິດຂອງຂ້າພະເຈົ້າ, **ຄພ** 127:2.

**ອິດຊາຄາ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອິດສະຣາເອນ *ບຳອີກ*

ລູກຊາຍຂອງຢາໂຄບກັບນາງເລອາ ໃນພຣະ ຄຳ ພີ ເດີມ (ປຖກ 30:17–18; 35:23;

46:13). ຜູ້ສືບ ຕະກຸນ ຂອງ ເພິ່ນ ໄດ້ກາຍ ເປັນ ໜຶ່ງໃນສິບສອງເຜົ່າຂອງອິດສະຣາເອນ.

*ເຜົ່າຂອງອິດຊາຄາ:* ພອນຂອງຢາໂຄບ ຕໍ່ອິດຊາຄາ ມີຢູ່ໃນປະຖົມມະການ 49:14–15. ຫລັງຈາກໄດ້ໄປຕັ້ງຖິ່ນຖານຢູ່ໃນການາອານ, ພວກເຂົາໄດ້ຮັບຄວາມລ້ຳລວຍບາງຢ່າງຈາກແຜ່ນດິນຟີລິດສະຕິນ, ລວມທັງທົ່ງພຽງເອສະດາອີໂລນ. ພາຍໃນເຂດແດນຂອງອິດຊາຄາ ມີຫລາຍແຫ່ງທີ່ສຳຄັນໃນປະຫວັດສາດຂອງຊາວຢິວ, ຍົກຕົວຢ່າງ, ກາເມນ, ເມກິດໂດ, ໂດທານ, ກິນໂບອາ, ເຢຊະເຣເອນ, ຕາໂບເຣ, ແລະ ນາຊາເຣັດ (ຢຊ 19:17–23).

**ອີຊາກ.** *ເບິ່ງ* ອັບຣາຮາມ—ເຊື້ອສາຍຂອງອັບຣາຮາມ *ນຳອີກ*

ປິຕຸໃນພຣະຄຳພີເດີມ. ການເກີດຂອງເພິ່ນຈາກອັບຣາຮາມ ແລະ ຊາຣາໃນໄວແກ່ຊະລາ ໄດ້ເປັນສິ່ງມະຫັດສະຈັນ (ປຖກ 15:4–6; 17:15–21; 21:1–8). ຄວາມເຕັມໃຈຂອງອັບຣາຮາມທີ່ຈະຖວາຍອີຊາກເປັນລັກສະນະດຽວກັນກັບພຣະເຈົ້າຖວາຍພຣະບຸດອົງດຽວທີ່ຖືກຳເນີດຂອງພຣະອົງ (ຢຄ 4:5). ອີຊາກໄດ້ຮັບຄຳສັນຍາແຫ່ງພັນທະສັນຍາຂອງອັບຣາຮາມ (ປຖກ 21:9–12; 1 ນຟ 17:40; ຄພ 27:10).

ອີຊາກໄດ້ເກີດມາ, **ປຖກ** 21:1–7. ຖືກເອົາໄປເພື່ອຖວາຍຢູ່ເທິງພູໂມຣີຢາ, **ປຖກ** 22:1–19 (ຄພ 101:4). ໄດ້ແຕ່ງງານ, **ປຖກ** 24. ໄດ້ຈັດການກັບພວກລູກຊາຍຂອງເພິ່ນ, **ປຖກ** 27:1–28:9.

ໄດ້ຮັບຄວາມສູງສົ່ງນຳອັບຣາຮາມ ແລະ ຢາໂຄບ, **ຄພ** 132:37 (ມທ 8:11).

**ອີເທີ.** *ເບິ່ງ* ຊາວຢາເຣັດ *ນຳອີກ*

ສາດສະດາຄົນສຸດທ້າຍຂອງຊາວຢາເຣັດໃນພຣະຄຳພີມໍມອນ (ອທ 12:1–2).

*ໜັງສືອີເທີ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີມໍມອນທີ່ບັນຈຸພາກສ່ວນໜຶ່ງຂອງບັນທຶກຂອງຊາວຢາເຣັດ. ຊາວຢາເຣັດເປັນຜູ້ຄົນກຸ່ມໜຶ່ງທີ່ໄດ້ອາໄສຢູ່ໃນຊີກໂລກເບື້ອງຕາເວັນຕົກເປັນເວລາຫລາຍສັດຕະວັດ ກ່ອນຜູ້ຄົນຂອງລີໄຮ. ໜັງສືອີເທີໄດ້ເອົາມາຈາກແຜ່ນຈາລຶກຊາວສີ່ແຜ່ນ ທີ່ຜູ້ຄົນຂອງລິມໄຮໄດ້ພົບເຫັນ (ມຊຢ 8:8–9).

ບົດ ທີ 1–2 ບອກເຖິງຊາວຢາເຣັດໄດ້ໜີຈາກບ້ານເຮືອນຂອງເຂົາເຈົ້າໃນສະໄໝຂອງຫໍບາເບນ ແລະ ໄດ້ເລີ່ມຕົ້ນການເດີນທາງຂອງເຂົາເຈົ້າໄປຫາບ່ອນທີ່ຮູ້ຈັກກັນວ່າທະວີບອາເມຣິກາ. ບົດທີ 3–6 ອະທິບາຍວ່ານ້ອງຊາຍຂອງຢາເຣັດໄດ້ເຫັນພຣະຜູ້ຊ່ວຍໃຫ້ລອດກ່ອນມະຕະ ແລະ ຊາວຢາເຣັດໄດ້ເດີນທາງໄປໃນເຮືອແປດລຳ. ບົດທີ 7–11 ສືບຕໍ່ປະຫວັດສາດຂອງຄວາມຊົ່ວຮ້າຍທີ່ຄອບງຳປະຫວັດສາດສ່ວນໃຫຍ່ຂອງຊາວຢາເຣັດ. ໂມໂຣໄນ, ຜູ້ຫຍໍ້ບັນທຶກຂອງອີເທີ, ໄດ້ຂຽນໃນບົດທີ 12–13 ເຖິງສິ່ງປະຫລາດທີ່ເກີດຂຶ້ນໂດຍສັດທາ ແລະ ເຖິງພຣະຄຣິດ ແລະ ເຢຣູຊາເລັມໃໝ່ຈະຖືກຕັ້ງຂຶ້ນ. ບົດທີ 14–15 ບອກເຖິງວິທີທີ່ຊາວຢາເຣັດກາຍເປັນປະຊາຊາດທີ່ຍິ່ງໃຫຍ່ ແຕ່ໄດ້ຖືກທຳລາຍໂດຍສົງຄາມເພາະຄວາມຊົ່ວຮ້າຍ.

**ອີລາຍ.** *ເບິ່ງ* ເອລີຢາ *ນຳອີກ*

ມີການໃຊ້ຊື່ ຫລື ຕຳແໜ່ງ *ອີລາຍ* ໃນຫລາຍຮູບແບບ ໃນພຣະຄຳພີ:

*ເອລີຢາ:* ອີລາຍຄື ພຣະຄຳພີໃໝ່ (ໃນພາສາກຣີກ) ເຖິງ ເອລີຢາ (ໃນພາສາເຮັບເຣີ), ເຊັ່ນໃນ ມທ 17:3–4, ລກ 4:25–26, ແລະ ຢກບ 5:17. ໃນກໍລະນີເຫລົ່ານີ້, ອີລາຍໄດ້ເປັນສາດສະດາໃນສະໄໝບູຮານ ຜູ້ຊຶ່ງການປະຕິບັດສາດສະໜາກິດຂອງເພິ່ນໄດ້ຖືກບັນທຶກໄວ້ໃນ 1 ແລະ 2 ກະສັດ.

*ຜູ້ທີ່ມາກ່ອນ:* ອີລາຍຍັງເປັນຕຳແໜ່ງໜຶ່ງອີກທີ່ໝາຍເຖິງການເປັນຜູ້ທີ່ມາກ່ອນ. ຍົກຕົວຢ່າງ, ໂຢຮັນບັບຕິສະໂຕຄື ອີລາຍ ເພາະເພິ່ນໄດ້ຖືກສົ່ງມາເພື່ອຕຽມທາງໄວ້ສຳລັບພຣະເຢຊູ (ມທ 17:12–13).

*ຜູ້ຟື້ນຟູ:* ຕຳແໜ່ງອີລາຍຍັງໝາຍເຖິງຄົນອື່ນໆ ອີກຜູ້ມີພາລະກິດສະເພາະ, ດັ່ງເຊັ່ນໂຢຮັນຜູ້ເປີດເຜີຍ (ຄພ 77:14) ແລະ ຄັບຣີເອນ (ລກ 1:11–20; ຄພ 27:6–7; 110:12).

*ຊາຍ ຄົນ ໜຶ່ງ ໃນ ຍຸກ ສະ ໄໝ ຂອງ ອັບ ຣາ ຮາມ:* ສາດສະດາທີ່ຖືກເອີ້ນວ່າ ເອຊາອັດ ຫລື ອີລາຍ ຜູ້ທີ່ໄດ້ມີຊີວິດຢູ່ໃນວັນເວລາຂອງອັບ ຣາຮາມ (ຄພ 84:11–13; 110:12).

**ອີດສະເຕີ.** *ເບິ່ງ* ການຟື້ນຄືນພຣະຊົນ, ການ ຟື້ນຄືນຊີວິດ; ພຣະເຢຊູຄຣິດ

**ອຸທິດຖວາຍ, ກົດແຫ່ງການອຸທິດຖວາຍ.** *ເບິ່ງ* ລະບົບເອກະພາບ; ອານາຈັກຂອງພຣະ ເຈົ້າ ຫລື ອານາຈັກສະຫວັນ *ບຳອີກ*

ການ ອຸ ທິດ, ການ ເຮັດ ໃຫ້ ສັກ ສິດ, ຫລື ການກາຍເປັນຄົນຊອບທຳ. ກົດແຫ່ງການອຸ ທິດຖວາຍເປັນຫລັກທຳອັນສູງສົ່ງ ຊຶ່ງໂດຍ ກົດນັ້ນຊາຍ ແລະ ຍິງ ຈຶ່ງເຕັມໃຈທີ່ຈະອຸທິດ ເວລາ, ພອນສະຫວັນ, ແລະ ຊັບສິນທີ່ຈະສ້າງ ຕັ້ງ ແລະ ການສ້າງສາອານາຈັກຂອງພຣະ ເຈົ້າ.

ມື້ນີ້ພວກເຈົ້າໄດ້ຖວາຍພວກເຈົ້າເອງແດ່ ພຣະຜູ້ເປັນເຈົ້າ, **ອພຍ** 32:29.

ທຸກຄົນທີ່ເຊື່ອໄດ້ມີທຸກສິ່ງທີ່ເປັນສ່ວນລວມ, **ກຈກ** 2:44–45.

ພວກເຂົາມີເຂົ້າຂອງທັງໝົດນຳກັນເປັນ ສ່ວນລວມ; ດັ່ງນັ້ນຈຶ່ງບໍ່ມີຜູ້ໃດຮັ່ງມີ ແລະ ຍາກ ຈົນ, **4 ນຟ** 1:3.

ພຣະຜູ້ເປັນເຈົ້າໄດ້ອະທິບາຍຫລັກທຳແຫ່ງ ການອຸທິດຖວາຍ, **ຄພ** 42:30–39 (ຄພ 51:2–19; 58:35–36). ຄົນໆໜຶ່ງຈະບໍ່ຄອບຄອງ ຫລາຍກວ່າອີກຄົນໜຶ່ງ, **ຄພ** 49:20. ທຸກຄົນ ໄດ້ຮັບເທົ່າທຽມກັນອີງຕາມຈຳນວນຄົນໃນ ຄອບຄົວຂອງຕົນ, **ຄພ** 51:3. ກົດລະບຽບໄດ້ ຖືກແຕ່ງຕັ້ງຂຶ້ນ ເພື່ອວ່າໄພ່ພົນຂອງພຣະເຈົ້າ ຈະສາມາດເທົ່າທຽມກັນໃນພັນທະການຂອງ ເລື່ອງແຫ່ງສະຫວັນ ແລະ ເລື່ອງແຫ່ງແຜ່ນດິນ ໂລກ, **ຄພ** 78:4–5. ທຸກຄົນຕ້ອງມີສິດເທົ່າທຽມ ກັນຕາມຄວາມຕ້ອງການ ແລະ ຄວາມຈຳເປັນ ຂອງເຂົາ, **ຄພ** 82:17–19. ຊີໂອນສາມາດຖືກ ສ້າງຂຶ້ນໄດ້ພຽງແຕ່ໂດຍຫລັກທຳຂອງກົດຂອງ ອານາຈັກຊັ້ນສູງເທົ່ານັ້ນ, **ຄພ** 105:5.

ຜູ້ຄົນຂອງເອນົກມີໃຈດຽວ ແລະ ມີຄວາມ ຄິດດຽວ ແລະ ໄດ້ດຳລົງຢູ່ໃນຄວາມຊອບທຳ, ແລະ ບໍ່ມີຄົນຍາກຈົນໃນບັນດາພວກເຂົາ, **ມຊ** 7:18.

**ອຸລີມ ແລະ ທຸມມີມ.** *ເບິ່ງ* ຜູ້ພະຍາກອນ; ແຜ່ນປີກເອີກ *ບຳອີກ*

ເຄື່ອງມືທີ່ພຣະເຈົ້າໄດ້ຕຽມໄວ້ ເພື່ອຊ່ວຍ ເຫລືອ ມະນຸດ ໃນການຮັບການເປີດເຜີຍ ແລະ ໃນການແປພາສາ. ໃນພາສາເຮັບເຣີ ຄຳນີ້ໝາຍຄວາມວ່າ "ຄວາມສະຫວ່າງ ແລະ ຄວາມສົມບູນ." ອຸລີມ ແລະ ທຸມມີມ ປະກອບ ດ້ວຍຫີນສອງກ້ອນ ທີ່ຕິດໃນຂອບໂຄ້ງທະນູທີ່ ເຮັດດ້ວຍເງິນ ແລະ ບາງເທື່ອໃຊ້ກັບແຜ່ນປົກ ເອິກ (ຄພ 17:1; ຈສ—ປ 1:35, 42, 52). ແຜ່ນ ດິນໂລກນີ້ຈະກາຍເປັນອຸລີມ ແລະ ທຸມມີມທີ່ ຍິ່ງໃຫຍ່ ໃນສະພາບທີ່ບໍລິສຸດ ແລະ ອະມະຕະ ຂອງມັນ (ຄພ 130:6–9).

ຈົ່ງໃສ່ອຸລີມ ແລະ ທຸມມີມ ໄວ້ໃນແຜ່ນປົກ ເອິກ, **ອພຍ** 28:30.

ແກ່ຜູ້ທີ່ມີໄຊຊະນະ ເຮົາຈະໃຫ້ຫີນຂາວແກ່ ຜູ້ນັ້ນ, **ພນມ** 2:17.

ຄວາມຮູ້ທີ່ເພິ່ນມີ ເພິ່ນສາມາດເບິ່ງ ແລະ ແປ, **ມຊຍ** 8:13. ຫີນສອງກ້ອນນີ້, ເຮົາຈະເອົາ ໃຫ້ເຈົ້າ, **ອທ** 3:23–24, 28 (ອທ 4:5).

ໂຈເຊັບ ສະມິດ ໄດ້ຮັບການເປີດເຜີຍຜ່ານ ອຸລີມ ແລະ ທຸມມີມ, ຄພ ຫົວພາກທີ 6; 11; 14–16. ເຈົ້າໄດ້ຮັບພະລັງໃຫ້ແປ ຜ່ານອຸລີມ ແລະ ທຸມມີມ, **ຄພ** 10:1. ພະຍານສາມຄົນຈະ ໄດ້ເຫັນອຸລີມ ແລະ ທຸມມີມ, ຊຶ່ງໄດ້ມອບໃຫ້ ແກ່ນ້ອງຊາຍຂອງຢາເຣັດຢູ່ເທິງພູ, **ຄພ** 17:1. ສະຖານທີ່ບ່ອນທີ່ພຣະເຈົ້າອາໄສຢູ່ເປັນອຸລີມ ແລະ ທຸມມີມທີ່ຍິ່ງໃຫຍ່. ຫີນຂາວຈະກາຍເປັນ ອຸລີມ ແລະ ທຸມມີມ ແກ່ທຸກຄົນທີ່ໄດ້ຮັບກ້ອນ ໜຶ່ງ, **ຄພ** 130:6–11.

ຂ້າພະເຈົ້າ, ອັບຣາຮາມ, ມີອຸລີມ ແລະ ທຸມມີມ, **ອຣຮ** 3:1, 4.

**ອູເຣ**

ໃນ ພຣະ ຄຳພີ ເດີມ, ແຜ່ນດິນອູເຣແຫ່ງ ເຄນເດຍ ເປັນບ້ານເກີດເມືອງນອນດັ້ງເດີມ ຂອງອັບຣາມ (ປຖກ 11:27–28, 31; 15:7; ນມຢ 9:7; ອຣຮ 2:1, 4).

**ເອສະເທີ**

ຜູ້ຍິງຄົນໜຶ່ງທີ່ມີສັດທາອັນຍິ່ງໃຫຍ່ ແລະ ເປັນຜູ້ສຳຄັນໃນພຣະທຳເອສະເທີ.

*ພຣະທຳເອສະເທີ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມ ທີ່ບັນຈຸເລື່ອງລາວກ່ຽວກັບຄວາມກ້າຫານຫລາຍທີ່ສຸດຂອງລາຊິນີເອສະເທີໃນການຊ່ວຍກູ້ຊີວິດຂອງຜູ້ຄົນຂອງນາງຈາກການທຳລາຍ.

ບົດ ທີ 1–2 ບອກເຖິງເອສະເທີ, ຍິງສາວຊາວຢິວ ແລະ ເປັນລູກລ້ຽງຂອງຊາຍຊາວຢິວຊື່ ມໍເດໄກ, ໄດ້ຖືກເລືອກໃຫ້ເປັນລາຊິນີຂອງເປີເຊຍ ເພາະຄວາມສວຍງາມຂອງນາງ. ບົດທີ 3 ອະທິບາຍວ່າ ຮາມານ, ນາຍົກລັດຖະມົນຕີຢູ່ໃນວັງຂອງກະສັດ, ກຽດຊັງມໍເດໄກ ແລະ ໄດ້ອອກຄຳສັ່ງໃຫ້ຂ້າຊາວຢິວທຸກຄົນ. ບົດທີ 4–10 ບອກເຖິງເອສະເທີໄດ້ສ່ຽງຊີວິດເປີດເຜີຍສັນຊາດຂອງນາງຕໍ່ກະສັດ ແລະ ໄດ້ປ່ຽນຄຳສັ່ງ.

**ເອຊະຣາ**

ປະໂລຫິດ ແລະ ຜູ້ຂຽນໃນພຣະຄຳພີເດີມຜູ້ໄດ້ພາຊາວຢິວບາງຈຳນວນກັບໄປເຢຣູຊາເລັມຈາກການເປັນຊະເລີຍທີ່ບາບີໂລນ (ອຊຣ 7–10; ນມຢ 8; 12). ໃນ 458 ປີ ກ່ອນ ຄ.ສ. ເພິ່ນໄດ້ຮັບການອະນຸຍາດຈາກອາກາຕາເຊເຊັດ, ກະສັດຂອງເປີເຊຍ, ເພື່ອພາຊາວຢິວທີ່ຖືກເນລະເທດຜູ້ຢາກກັບຄືນເຢຣູຊາເລັມໄປກັບເພິ່ນ (ອຊຣ 7:12–26).

ກ່ອນວັນເວລາຂອງເອຊະຣາ, ພວກປະໂລຫິດເກືອບມີອຳນາດທັງໝົດໃນການອ່ານ ແລະ ຮວບຮວມພຣະຄຳພີທີ່ຖືກຂຽນ ທີ່ເອີ້ນວ່າ "ກົດ." ເອຊະຣາໄດ້ຊ່ວຍເຮັດໃຫ້ພຣະຄຳພີມີໄວ້ສຳລັບຊາວຢິວແຕ່ລະຄົນ. ໃນທີ່ສຸດການເປີດອ່ານ "ປຶ້ມກົດ" ກໍໄດ້ກາຍເປັນສິ່ງສຳຄັນຕໍ່ຊີວິດຂອງຊາວຢິວ. ບາງທີຄຳສອນອັນສຳຄັນທີ່ສຸດຂອງເອຊະຣາມາຈາກຕົວຢ່າງຂອງການຕຽມໃຈຂອງເພິ່ນ ທີ່ຈະສະແຫວງຫາກົດຂອງພຣະຜູ້ເປັນເຈົ້າ, ທີ່ຈະເຊື່ອຟັງມັນ, ແລະ ສິດສອນມັນໃຫ້ກັບຄົນອື່ນ (ອຊຣ 7:10).

*ພຣະທຳເອຊະຣາ:* ບົດທີ 1–6 ບັນຍາຍເຖິງເຫດການທີ່ໄດ້ເກີດຂຶ້ນຈາກຫົກສິບ ຫາ ແປດສິບປີ ກ່ອນເອຊະຣາໄດ້ມາຫາເຢຣູຊາເລັມ—ການອອກຄຳສັ່ງຂອງໄຊຣັດ ໃນ 537 ປີ ກ່ອນ ຄ.ສ. ແລະ ການກັບມາຂອງຊາວຢິວພາຍໃຕ້ການນຳພາຂອງເສລຸບບາເບນ. ບົດທີ 7–10 ສະແດງເຖິງວິທີທີ່ເອຊະຣາໄປຫາເຢຣູຊາເລັມ. ເພິ່ນ, ພ້ອມດ້ວຍຜູ້ເດີນທາງ, ໄດ້ຖືສິນອົດເຂົ້າ ແລະ ອະທິຖານເພື່ອການປົກປ້ອງ. ຢູ່ທີ່ເຢຣູຊາເລັມ ເຂົາເຈົ້າໄດ້ພົບເຫັນຊາວຢິວຫລາຍຄົນທີ່ໄດ້ໄປຫາເຢຣູຊາເລັມກ່ອນແລ້ວ ພາຍໃຕ້ການນຳພາຂອງເສລຸບບາເບນ ແລະ ໄດ້ແຕ່ງງານກັບພວກຜູ້ຍິງນອກພັນທະສັນຍາ ແລະ ດັ່ງນັ້ນ ຈຶ່ງໄດ້ນຳຄວາມເສື່ອມເສຍມາໃຫ້ຕົນເອງ. ເອຊະຣາໄດ້ອະທິຖານເພື່ອເຂົາເຈົ້າ ແລະ ໄດ້ນຳເຂົາເຈົ້າມາຢູ່ພາຍໃຕ້ພັນທະສັນຍາ ເພື່ອໃຫ້ປະຮ້າງພວກເມຍເຫລົ່ານັ້ນ. ປະຫວັດຕອນຫລັງຂອງເອຊະຣາມີຢູ່ໃນພຣະທຳເນເຫມີຢາ.

**ເອຊາຢາ**

ສາດສະດາໃນພຣະຄຳພີເດີມຜູ້ໄດ້ທຳນາຍຈາກ 740–701 ປີ ກ່ອນ ຄ.ສ. ໃນຖານະທີ່ເປັນທີ່ປຶກສາຄົນສຳຄັນຂອງກະສັດເຮເຊກີຢາ, ເອຊາຢາມີອິດທິພົນຫລາຍທາງສາດສະໜາ ແລະ ທາງການເມືອງ.

ພຣະເຢຊູໄດ້ອ້າງເຖິງເອຊາຢາເລື້ອຍໆຫລາຍກວ່າພຣະອົງອ້າງເຖິງສາດສະດາຄົນອື່ນໆ. ເອຊາຢາກໍຖືກອ້າງເຖິງເລື້ອຍໆເໝືອນກັນໂດຍ ເປໂຕ, ໂຢຮັນ, ແລະ ໂປໂລ ໃນພຣະຄຳພີໃໝ່. ພຣະຄຳພີມໍມອນ ແລະ ຄຳສອນ ແລະ ພັນທະສັນຍາ ບັນຈຸຂໍ້ຄວາມຈາກເອຊາຢາຫລາຍກວ່າສາດສະດາຄົນອື່ນໆ ແລະ ໃຫ້ຄວາມຊ່ວຍເຫລືອໄດ້ຫລາຍໃນການຕີຄວາມໝາຍຄຳຂອງເອຊາຢາ. ນີໄຟໄດ້ສິດສອນຜູ້ຄົນຂອງເພິ່ນຈາກການຂຽນຂອງ ເອຊາຢາ (2 ນຟ 12–24; ອຊຢ 2–14). ພຣະຜູ້ເປັນເຈົ້າໄດ້ບອກຊາວນີໄຟວ່າ "ຖ້ອຍຄຳຂອງເອຊາຢາຍິ່ງໃຫຍ່" ແລະ ວ່າທຸກສິ່ງທີ່ເອຊາຢາໄດ້ທຳນາຍໄວ້ຈະສຳເລັດຄົບຖ້ວນ (3 ນຟ 23:1–3).

*ພຣະທຳເອຊາຢາ:* ໜັງສືເຫລັ້ມໜຶ່ງໃນພຣະ

ຄຳພີເດີມ. ຄຳທຳນາຍຢ່າງຫລວງຫລາຍຂອງເອຊາຢາກ່ຽວຂ້ອງກັບການສະເດັດມາຂອງພຣະຜູ້ໄຖ່, ທັງການປະຕິບັດສາດສະໜາກິດຢູ່ໃນໂລກຂອງພຣະອົງ (ອຊຢ 9:6) ແລະ ໃນຖານະທີ່ເປັນກະສັດທີ່ຍິ່ງໃຫຍ່ໃນວັນສຸດທ້າຍ (ອຊຢ 63). ເພິ່ນໄດ້ທຳນາຍໄວ້ຢ່າງຫລວງຫລາຍກ່ຽວກັບອະນາຄົດຂອງອິດສະຣາເອນນຳອີກ.

ບົດທີ 1 ເປັນບົດນຳສຳລັບໜັງສືເຫລັ້ມນີ້ທັງເຫລັ້ມ. ເອຊາຢາ 7:14; 9:6–7; 11:1–5; 53; ແລະ 61:1–3 ເປັນສັນຍານລ່ວງໜ້າເຖິງພາລະກິດຂອງພຣະຜູ້ຊ່ວຍໃຫ້ລອດ. ບົດທີ 2, 11, 12, ແລະ 35 ກ່ຽວຂ້ອງກັບເຫດການໃນຍຸກສຸດທ້າຍ, ເມື່ອພຣະກິດຕິຄຸນຈະໄດ້ຮັບການຟື້ນຟູຄືນມາໃໝ່, ອິດສະຣາເອນຈະຖືກເຕົ້າໂຮມ, ແລະ ແຜ່ນດິນທີ່ແຫ້ງແລ້ງຈະອອກດອກດັ່ງກຸຫລາບ. ບົດທີ 29 ບັນຈຸຄຳທຳນາຍຂອງການອອກມາຂອງພຣະຄຳພີມໍມອນ (2 ນຟ 27). ບົດທີ 40–46 ປະກາດຄວາມເລີດລ້ຳຂອງພຣະເຢໂຮວາ ໃນຖານະເປັນພຣະເຈົ້າທີ່ແທ້ຈິງ ເໜືອພຣະປອມທີ່ເປັນຮູບບູຊາຂອງຜູ້ນະມັດສະການນອກສາດສະໜາ. ສ່ວນບົດທີ, 47–66, ກ່ຽວຂ້ອງກັບເຫດການຕ່າງໆໃນການຟື້ນຟູອິດສະຣາເອນເທື່ອສຸດທ້າຍ ແລະ ການສະຖາປະນາຊີໂອນ, ໂດຍມີພຣະຜູ້ເປັນເຈົ້າສະຖິດຢູ່ໃນບັນດາຜູ້ຄົນຂອງພຣະອົງ.

**ເອຊາວ.** *ເບິ່ງ* ຢາໂຄບ, ລູກຊາຍຂອງອີຊາກ; ອີຊາກ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍກົກຂອງອີຊາກກັບນາງເຣເບກາ ແລະ ເປັນອ້າຍນ້ອງຝາແຝດກັບຢາໂຄບ. ສອງອ້າຍນ້ອງນີ້ມັກຜິດຖຽງກັນນັບແຕ່ເກີດ (ປຖກ 25:19–26). ລູກຫລານຂອງເອຊາວ, ຊາວເອໂດມ, ແລະ ລູກຫລານຂອງຢາໂຄບ, ຊາວອິດສະຣາເອນ, ກາຍເປັນປະຊາຊາດທີ່ມັກແຂ່ງຂັນກັນ (ປຖກ 25:23).

ເອຊາວໄດ້ຂາຍສິດທິຂອງອ້າຍກົກໃຫ້ຢາໂຄບ, **ປຖກ** 25:33 (ຮຣ 12:16–17). ເອຊາວໄດ້ແຕ່ງງານກັບລູກສາວຂອງຊາວຮິດຕີສອງຄົນຜູ້ສ້າງຄວາມທຸກໂສກໃຫ້ແກ່ພໍ່ແມ່ຂອງລາວ, **ປຖກ** 26:34–35. ຢາໂຄບ ແລະ ເອຊາວໄດ້ຄືນດີກັນ, **ປຖກ** 33.

**ເອຊາອັດ**

ພຣະຄຳພີໃໝ່ໃນພາສາ (ກຣີກ) ແມ່ນຊື່ເອຊາຢາ (ລກ 4:17). ເອຊາອັດກໍເປັນສາດສະດາຜູ້ໄດ້ມີຊີວິດຢູ່ໃນວັນເວລາຂອງອັບຣາຮາມ (ຄພ 76:100; 84:13)

**ເອເຊກຽນ**

ສາດສະດາຄົນໜຶ່ງຜູ້ໄດ້ຂຽນພຣະທຳເອເຊກຽນໃນພຣະຄຳພີເດີມ. ເພິ່ນເປັນປະໂລຫິດຂອງຄອບຄົວສາດົກ ແລະ ເປັນຊາວຢິວຄົນໜຶ່ງທີ່ໄດ້ຖືກເນບູກາດເນັດສາຈັບຕົວໄປ. ເພິ່ນໄດ້ຢູ່ກັບຄົນຢິວທີ່ຖືກເນລະເທດໄປບາບີໂລນ ແລະ ໄດ້ທຳນາຍເປັນເວລາຊາວສອງປີ, ຈາກ 592 ປີ ເຖິງ 570 ປີ ກ່ອນ ຄ.ສ.

*ພຣະທຳເອເຊກຽນ:* ພຣະທຳເອເຊກຽນສາມາດແຍກອອກເປັນສີ່ໝວດ. ບົດທີ 1–3 ບອກເຖິງພາບນິມິດກ່ຽວກັບພຣະເຈົ້າ ແລະ ການເອີ້ນເອເຊກຽນໃຫ້ຮັບໃຊ້; ບົດທີ 4–24 ກ່າວເຖິງການຕັດສິນເຢຣູຊາເລັມ ແລະ ເປັນຫຍັງຈຶ່ງໄດ້ມອບການຕັດສິນເຫລົ່ານັ້ນໃຫ້; ບົດທີ 25–32 ປະກາດການຕັດສິນປະຊາຊາດ; ແລະ ບົດທີ 33–48 ບັນທຶກພາບນິມິດກ່ຽວກັບອິດສະຣາເອນໃນຍຸກສຸດທ້າຍ.

**ເອເດນ.** *ເບິ່ງ* ອາດາມ; ເອວາ *ນຳອີກ*

ບ້ານແຫ່ງທຳອິດຂອງບິດາມານດາຂອງເຮົາ, ອາດາມ ແລະ ເອວາ (ປຖກ 2:8–3:24; 4:16; 2 ນຟ 2:19–25; ມຊ 3–4; ອຮຮ 5), ໄດ້ຖືກຕົກແຕ່ງເປັນສວນ, ຢູ່ທາງເບື້ອງຕາເວັນອອກໃນເອເດນ. ອາດາມ ແລະ ເອວາ ໄດ້ຖືກສົ່ງໜີອອກຈາກເອເດນ ຫລັງຈາກໄດ້ກິນໝາກໄມ້ທີ່ຕ້ອງຫ້າມ ແລະ ກາຍເປັນມະຕະ (ມຊ 4:29). ການເປີດເຜີຍຍຸກສຸດທ້າຍຢືນຢັນເລື່ອງລາວໃນພຣະຄຣິສຕະທຳຄຳພີກ່ຽວກັບສວນເອເດນ. ມັນເພີ່ມຂໍ້ມູນສຳຄັນທີ່ວ່າ ສວນນັ້ນຕັ້ງຢູ່ບ່ອນທີ່ໃນປະຈຸບັນນີ້ເອີ້ນວ່າ ທະວີບອາເມຣິກາເໜືອ.

**ເອນົກ.** *ເບິ່ງ* ຊີໂອນ *ນຳອີກ*

ສາດສະດາຄົນໜຶ່ງຜູ້ໄດ້ນຳພາຜູ້ຄົນຂອງເມືອງຊີໂອນ. ການປະຕິບັດສາດສະໜາກິດຂອງເພິ່ນໄດ້ຖືກບັນຍາຍໄວ້ທັງໃນພຣະຄຳພີເດີມ ແລະ ໃນພຣະຄຳພີໄຂ່ມຸກອັນລ້ຳຄ່າ. ເພິ່ນເປັນປິຕຸຄົນທີເຈັດຫລັງຈາກອາດາມ. ເພິ່ນເປັນລູກຊາຍຂອງຢາເຣັດ ແລະ ເປັນພໍ່ຂອງເມທູເຊລາ (ປຖກ 5:18–24; ລກ 3:37).

ເອນົກເປັນຊາຍທີ່ຍິ່ງໃຫຍ່ ແລະ ການປະຕິບັດສາດສະໜາກິດຂອງເພິ່ນນັ້ນສຳຄັນຫລາຍກວ່າເລື່ອງສັ້ນໆທີ່ພຣະຄຣິສຕະທຳຄຳພີບັນທຶກໄວ້. ພຣະຄຣິສຕະທຳຄຳພີໄດ້ບອກວ່າ ເພິ່ນໄດ້ປ່ຽນສະພາບຮ່າງກາຍ (ຮຣ 11:5) ແຕ່ບໍ່ໄດ້ບອກລາຍລະອຽດກ່ຽວກັບການປະຕິບັດສາດສະໜາກິດຂອງເພິ່ນ. ຢດ 1:14 ບັນຈຸຄຳກ່າວອ້າງຂອງຄຳທຳນາຍຂອງເພິ່ນ. ການເປີດເຜີຍຍຸກສຸດທ້າຍອະທິບາຍຫລາຍຢ່າງກ່ຽວກັບເອນົກ, ໂດຍສະເພາະການສັ່ງສອນຂອງເພິ່ນ, ເມືອງຂອງເພິ່ນຖືກເອີ້ນວ່າ ຊີໂອນ, ພາບນິມິດຂອງເພິ່ນ, ແລະ ການທຳນາຍຂອງເພິ່ນ (ຄພ 107:48–57; ມຊ 6–7). ຊີໂອນໄດ້ຖືກຮັບຂຶ້ນສະຫວັນ ເພາະຄວາມຊອບທຳຂອງຜູ້ຄົນທີ່ອາໄສຢູ່ໃນນັ້ນ (ມຊ 7:69).

ພຣະເຈົ້າໄດ້ເປີດເຜີຍພຣະອົງເອງຕໍ່ເອນົກ, **ມຊ** 6:26–37. ເອນົກໄດ້ສິດສອນພຣະກິດຕິຄຸນ, **ມຊ** 6:37–68. ເອນົກໄດ້ສິດສອນຜູ້ຄົນ ແລະ ໄດ້ສະຖາປະນາຊີໂອນຂຶ້ນ, **ມຊ** 7:1–21. ເອນົກໄດ້ເຫັນທຸກສິ່ງ, ແມ່ນແຕ່ຈົນເຖິງທີ່ສຸດຂອງແຜ່ນດິນໂລກ, **ມຊ** 7:23–68.

**ເອໂນດ, ລູກຊາຍຂອງຢາໂຄບ**

ສາດສະດານີໄຟ ແລະ ຜູ້ຮັກສາບັນທຶກໃນພຣະຄຳພີມໍມອນ ທີ່ໄດ້ອະທິຖານ ແລະ ໄດ້ຮັບການປົດຈາກບາບຂອງເພິ່ນ ຜ່ານສັດທາຂອງເພິ່ນໃນພຣະຄຣິດ (ອນ 1:1–8). ພຣະຜູ້ເປັນເຈົ້າໄດ້ເຮັດພັນທະສັນຍາກັບເອໂນດເພື່ອນຳພຣະຄຳພີມໍມອນມາໃຫ້ຊາວເລມັນ (ອນ 1:15–17).

*ໜັງສືເອໂນດ:* ໜັງສືໃນພຣະຄຳພີມໍມອນທີ່ບອກກ່ຽວກັບການອະທິຖານຂອງເອໂນດຫາພຣະຜູ້ເປັນເຈົ້າ ທູນຂໍການອະໄພໂທດເພື່ອຕົນເອງ, ເພື່ອຜູ້ຄົນຂອງເພິ່ນ, ແລະ ເພື່ອຄົນອື່ນໆ. ພຣະຜູ້ເປັນເຈົ້າໄດ້ສັນຍາກັບເພິ່ນວ່າພຣະຄຳພີມໍມອນຈະຖືກຮັກສາໄວ້ ແລະ ມີໃຫ້ແກ່ຊາວເລມັນໃນອະນາຄົດ. ເຖິງແມ່ນວ່າໜັງສືນີ້ຈະມີພຽງແຕ່ບົດດຽວເທົ່ານັ້ນ, ແຕ່ມັນກໍບັນທຶກເລື່ອງລາວທີ່ມີພະລັງກ່ຽວກັບຊາຍຄົນໜຶ່ງຜູ້ໄດ້ສະແຫວງຫາພຣະເຈົ້າໃນການອະທິຖານ, ໄດ້ດຳລົງຊີວິດຕາມພຣະບັນຊາຂອງພຣະເຈົ້າ, ແລະ ກ່ອນການຕາຍຂອງເພິ່ນ, ເພິ່ນໄດ້ຊື່ນຊົມກັບຄວາມຮູ້ເລື່ອງພຣະຜູ້ໄຖ່.

**ເອຟະຣາອິມ.** *ເບິ່ງ* ພຣະຄຳພີມໍມອນ; ມານາເຊ; ໂຢເຊັບ, ລູກຊາຍຂອງຢາໂຄບ; ອິດສະຣາເອນ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຄົນທີສອງຂອງໂຢເຊັບກັບນາງອາເຊນັດ (ປຖກ 41:50–52; 46:20). ກົງກັນຂ້າມກັບຮີດຄອງປະເພນີ, ເອຟະຣາອິມໄດ້ຮັບສິດທິຂອງອ້າຍກົກແທນທີ່ຈະເປັນມານາເຊ, ຜູ້ເປັນອ້າຍ (ປຖກ 48:17–20). ເອຟະຣາອິມໄດ້ກາຍເປັນບັນພະບຸລຸດຂອງເຜົ່າເອຟະຣາອິມ.

*ເຜົ່າຂອງເອຟະຣາອິມ:* ເອຟະຣາອິມໄດ້ຮັບສິດທິຂອງອ້າຍກົກໃນອິດສະຣາເອນ (1 ຂຄ 5:1–2; ຢມຢ 31:9). ໃນຍຸກສຸດທ້າຍ ສິດທິພິເສດ ແລະ ໜ້າທີ່ຮັບຜິດຊອບແມ່ນທີ່ຈະດຳລົງຖານະປະໂລຫິດ, ນຳຂ່າວສານເລື່ອງການຟື້ນຟູພຣະກິດຕິຄຸນໄປໃຫ້ຊາວໂລກ, ແລະ ຍົກປ້າຍສັນຍານຂຶ້ນເພື່ອເຕົ້າໂຮມອິດສະຣາເອນ (ອຊຢ 11:12–13; 2 ນຟ 21:12–13). ລູກຫລານຂອງເອຟະຣາອິມຈະສວມລັດສະໝີພາບໃຫ້ຜູ້ທີ່ມາຈາກປະເທດທາງເໜືອ ທີ່ກັບມາໃນຍຸກສຸດທ້າຍ (ຄພ 133:26–34).

*ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ:* ບັນທຶກຂອງກຸ່ມໜຶ່ງຈາກເຜົ່າເອຟະຣາອິມ ທີ່ຖືກພາໜີຈາກເຢຣູຊາເລັມໄປຫາອາເມຣິກາປະມານ 600 ປີ ກ່ອນ ຄ.ສ. ບັນທຶກຂອງກຸ່ມນີ້ຖືກເອີ້ນວ່າ ກິ່ງງ່າຂອງເອຟະຣາອິມ ຫລື ໂຢເຊັບ, ຫລື ພຣະຄຳພີມໍມອນ. ກິ່ງງ່ານີ້ ແລະ ກິ່ງງ່າຂອງຢູດາ (ພຣະຄຣິສຕະທຳຄຳພີ) ຈະລວມ

ກັນເປັນປະຈັກພະຍານເຖິງ ພຣະຜູ້ເປັນເຈົ້າ ພຣະເຢຊູຄຣິດ, ການຟື້ນຄືນພຣະຊົນຂອງ ພຣະອົງ, ແລະ ວຽກງານທີ່ສັກສິດຂອງພຣະ ອົງໃນບັນດາສອງກົ່ງງ່າເຫລົ່ານີ້ຂອງເຊື້ອສາຍ ອິດສະຣາເອນ.

ກົ່ງງ່າຂອງເອຟະຣາອິມຈະແຕກຫັກອອກ ມາ ແລະ ຈະຂຽນປະຈັກພະຍານອີກຢ່າງໜຶ່ງ ເຖິງພຣະຄຣິດ, **ປຈສ, ປຖກ** 50:24–26, 30–31. ກົ່ງງ່າຂອງຢູດາ ແລະ ກົ່ງງ່າຂອງໂຢເຊັບ ຈະກາຍເປັນໜຶ່ງ, **ອຊກ** 37:15–19.

ການຂຽນຂອງຢູດາ ແລະ ໂຢເຊັບ ຈະເຕີບ ໂຕພ້ອມກັນ, **2 ນຟ** 3:12. ພຣະຜູ້ເປັນເຈົ້າໄດ້ ກ່າວກັບຫລາຍປະຊາຊາດ, **2 ນຟ** 29.

ຂໍກະແຈຂອງບັນທຶກກົ່ງງ່າຂອງເອຟະ ຣາອິມໄດ້ຖືກມອບໃຫ້ໂມໂຣໄນ, **ຄພ** 27:5.

**ເອເຟໂຊ, ສານເຖິງ.** *ເບິ່ງ* ສານຂອງໂປໂລ; ໂປໂລ *ນຳອີກ*

ໃນພຣະຄຳພີໃໝ່, ສານທີ່ຂຽນໂດຍອັກຄະ ສາວົກໂປໂລເຖິງໄພ່ພົນຂອງພຣະເຈົ້າໃນ ເມືອງເອເຟໂຊ. ສານນີ້ມີຄວາມສຳຄັນຫລາຍ, ເພາະມັນບັນຈຸຄຳສັ່ງສອນຂອງໂປໂລກ່ຽວກັບ ສາດສະໜາຈັກຂອງພຣະຄຣິດ.

ບົດທີ 1 ບັນຈຸຄຳທັກທາຍຕາມປົກກະຕິ. ບົດ ທີ 2–3 ອະທິບາຍເຖິງຄວາມປ່ຽນແປງທີ່ເກີດ ຂຶ້ນໃນຜູ້ຄົນ ເມື່ອເຂົາເຈົ້າກາຍເປັນສະມາ ຊິກຂອງສາດສະໜາຈັກ—ເຂົາເຈົ້າກາຍເປັນ ພົນລະເມືອງນຳໄພ່ພົນຂອງພຣະເຈົ້າ, ນຳຄົນ ຕ່າງຊາດ ແລະ ຊາວຢິວ ໄດ້ລວມເຂົ້າກັນເປັນ ສາດສະໜາຈັກດຽວ. ບົດທີ 4–6 ອະທິບາຍ ເຖິງບົດບາດຂອງອັກຄະສາວົກ ແລະ ສາດສະ ດາ, ຄວາມຈຳເປັນຕ້ອງເປັນໜຶ່ງ, ແລະ ຄວາມ ຈຳເປັນຕ້ອງສວມຍຸດທະພັນຄົບຊຸດຂອງ ພຣະເຈົ້າ.

**ເອມານູເອນ.** *ເບິ່ງ* ພຣະເຢຊູຄຣິດ *ນຳອີກ*

ພຣະນາມໜຶ່ງອີກຂອງພຣະເຢຊູຄຣິດ. ມັນມາຈາກພາສາເຮັບເຣີ ທີ່ໝາຍຄວາມວ່າ "ພຣະເຈົ້າທີ່ສະຖິດຢູ່ນຳເຮົາ."

ເອມານູເອນເປັນພຣະນາມໜຶ່ງທີ່ມອບໃຫ້ ເພື່ອເປັນເຄື່ອງໝາຍຂອງການປົດປ່ອຍຂອງ ພຣະເຈົ້າ (ອຊຢ 7:14). ການອ້າງອີງຂອງ ເອຊາຢາເຖິງເອມານູເອນໄດ້ລະບຸໄວ້ເປັນພິ ເສດໂດຍມັດທາຍວ່າເປັນການພະຍາກອນ ເຖິງການກຳເນີດຂອງພຣະເຢຊູສູ່ຊີວິດມະຕະ (ມທ 1:18–25). ພຣະນາມນີ້ຍັງປະກົດໃນ ພຣະຄຳພີຍຸກສຸດທ້າຍອີກດ້ວຍ (2 ນຟ 17:14; 18:8; ຄພ 128:22).

**ເອຢິບ**

ປະເທດໜຶ່ງຢູ່ສົ້ນເໜືອຂອງອາຟຣິກາ. ແຜ່ນດິນສ່ວນໃຫຍ່ຂອງເອຢິບແມ່ນແຫ້ງແລ້ງ ແລະ ເປົ່າປ່ຽວ. ສ່ວນຫລາຍແລ້ວຜູ້ຄົນອາໄສ ຢູ່ຕາມຮ່ອມພູແມ່ນ້ຳນິນ, ຊຶ່ງກວ້າງໄກເຖິງ 550 ໄມ (890 ກິໂລແມັດ).

ເອຢິບໃນສະໄໝບູຮານເປັນປະເທດທີ່ຮັ່ງ ມີ ແລະ ຈະເລີນກ້າວໜ້າ. ວຽກງານສາທາລະ ນະທີ່ໃຫຍ່ໂຕໄດ້ຖືກສ້າງຂຶ້ນ, ລວມທັງການ ສ້າງຄອງລະບາຍນ້ຳ; ເປັນເມືອງທີ່ເຂັ້ມແຂງ ທາງດ້ານການປ້ອງກັນ; ແລະ ອານຸສອນຂອງ ບັນດາກະສັດ, ໂດຍສະເພາະສຸສານປີລະມິດ ແລະ ພຣະວິຫານ, ຊຶ່ງຍັງເປັນສິ່ງທີ່ຊາວໂລກ ອັດສະຈັນໃຈຢູ່. ເພາະໃນຊ່ວງໄລຍະໜຶ່ງ, ການປົກຄອງຂອງຊາວເອຢິບເປັນການລອກ ແບບລະບຽບແຫ່ງປີຕຸຂອງຖານະປະໂລຫິດ (ອຣຮ 1:21–27).

ອັບຣາຮາມ ແລະ ໂຢເຊັບ ໄດ້ຖືກພາໄປ ຫາເອຢິບເພື່ອໄວ້ຊີວິດຄອບຄົວຂອງຕົນຈາກ ຄວາມອຶດຢາກ, **ປຖກ** 12:10 (ປຖກ 37:28). ໂຢເຊັບໄດ້ຖືກຂາຍໄປຍັງປະເທດເອຢິບ, **ປຖກ** 45:4–5 (1 ນຟ 5:14–15). ຢາໂຄບຖືກ ພາໄປປະເທດເອຢິບ, **ປຖກ** 46:1–7. ໂມເຊ ໄດ້ນຳພາລູກຫລານຂອງອິດສະຣາເອນອອກ ໄປຈາກປະເທດເອຢິບ, **ອພຍ** 3:7–10; 13:14 (ຮຣ 11:27; 1 ນຟ 17:40; ມຊ 1:25–26). ເອຢິບເປັນສັນຍາລັກເຖິງຄວາມຊົ່ວຊ້າ, **ອຊກ** 29:14–15 (ຣສອ 9:3–7; ອຣຮ 1:6, 8, 11–12, 23).

ທູດໄດ້ບອກໂຢເຊັບໃຫ້ໜີໄປປະເທດເອຢິບ ພ້ອມກັບນາງມາຣີ ແລະ ພຣະເຢຊູ, **ມທ** 2:13 (ຣສອ 11:1).

**ເອຢິບໂຕ**

ເປັນຊື່ຂອງເມຍ ແລະ ລູກສາວຂອງຮາມ, ຜູ້ຊຶ່ງເປັນລູກຊາຍຂອງໂນອາ. ໃນ ເຄນເດຍ, ຊື່ນີ້ໝາຍຄວາມວ່າ "ເອຢິບ," ຫລື "ສິ່ງທີ່ຕ້ອງຫ້າມ" (ອຣຮ 1:23–25).

**ເອລີ.** *ເບິ່ງ* ຊາມູເອນ, ສາດສະດາໃນພຣະຄຳພີເດີມ *ບຳອິກ*

ມະຫາປະໂລຫິດ ແລະ ຜູ້ຕັດສິນໃນພຣະຄຳພີເດີມ ເມື່ອພຣະຜູ້ເປັນເຈົ້າໄດ້ເອີ້ນຊາມູເອນໃຫ້ເປັນສາດສະດາ (1 ຊມອ 3). ພຣະຜູ້ເປັນເຈົ້າໄດ້ຕິຕຽນເພິ່ນເພາະການໂຍະຍານເລື່ອງຄວາມຊົ່ວຮ້າຍຂອງ ພວກລູກຊາຍຂອງເພິ່ນ (1 ຊມອ 2:22–36; 3:13).

**ເອລີຊາ**

ສາດສະດາຄົນໜຶ່ງໃນພຣະຄຳພີເດີມຂອງອານາຈັກພາກເໜືອຂອງອິດສະຣາເອນ ແລະ ເປັນຜູ້ໃຫ້ຄຳແນະນຳທີ່ໄວ້ວາງໃຈໄດ້ຕໍ່ກະສັດຫລາຍອົງໃນປະເທດນັ້ນ.

ເອລີຊາມີນິໄສໃຈຄໍທີ່ອ່ອນໂຍນ ແລະ ຮັກໄຄ່, ປາດສະຈາກຄວາມກະຕືລືລົ້ນອັນຮ້ອນແຮງ ຊຶ່ງແຕກຕ່າງຈາກອາຈານຂອງເພິ່ນ, ເອລີຢາ. ສິ່ງມະຫັດສະຈັນທີ່ສຳຄັນຂອງເພິ່ນ (2 ກສ 2–5; 8) ເປັນພະຍານວ່າ ເພິ່ນໄດ້ຮັບອຳນາດຂອງເອລີຢາແທ້ໆ ເມື່ອເພິ່ນໄດ້ຂຶ້ນເປັນສາດສະດາຕໍ່ຈາກເອລີຢາ (2 ກສ 2:9–12). ຍົກຕົວຢ່າງ, ເພິ່ນໄດ້ເຮັດໃຫ້ນ້ຳຂົມກາຍເປັນນ້ຳຈືດ, ໄດ້ແຍກແມ່ນ້ຳຈໍແດນ, ໄດ້ເພີ່ມນ້ຳມັນໃຫ້ແມ່ໝ້າຍ, ໄດ້ນຳເດັກນ້ອຍຜູ້ຊາຍໃຫ້ເປັນຄືນມາມີຊີວິດ, ໄດ້ປິ່ນປົວຊາຍຄົນໜຶ່ງຈາກພະຍາດຂີ້ທູດ, ໄດ້ເຮັດໃຫ້ຂວານເຫລັກຟູຂຶ້ນ, ແລະ ເຮັດໃຫ້ພວກທະຫານຊີເຣຍຕາບອດ (2 ກສ 2–6). ການປະຕິບັດສາດສະໜາກິດຂອງເພິ່ນແມ່ນຫລາຍກວ່າຫ້າສິບປີລະຫວ່າງການປົກຄອງຂອງ ເຢໂຮລາມ, ເຢຮູ, ເຢໂຮອາຮາດ, ແລະ ໂຢອາດ.

ໄດ້ຮັບເສື້ອຄຸມຂອງເອລີຢາ, **2 ກສ** 2:13. ໄດ້ເຕີມນ້ຳມັນໃຫ້ແມ່ໝ້າຍ, **2 ກສ** 4:1–7. ໄດ້ນຳລູກຊາຍຂອງຍິງຊາວຊູເນມໃຫ້ເປັນຄືນມາມີຊີວິດ, **2 ກສ** 4:18–37. ໄດ້ປິ່ນປົວນາອາມານ, ຄົນຊີເຣຍ, **2 ກສ** 5:1–14. ໄດ້ເຮັດໃຫ້ພວກທະຫານຊາວຊີເຣຍຕາບອດ, ແລະ ເປີດຕາຜູ້ຮັບໃຊ້ຂອງເພິ່ນ, **2 ກສ** 6:8–23.

**ເອລີຊາເບັດ.** *ເບິ່ງ* ໂຢຮັນບັບຕິສະໂຕ *ບຳອິກ*

ໃນພຣະຄຳພີໃໝ່, ເມຍຂອງຊາຂາຣີຢາ, ແມ່ຂອງໂຢຮັນບັບຕິສະໂຕ, ແລະ ພີ່ນ້ອງທີ່ຮັກແພງຂອງນາງມາຣີ (ລກ 1:5–60).

**ເອລີຢາ.** *ເບິ່ງ* ຜະນຶກ, ການຜະນຶກ; ລອດ, ຄວາມລອດ; ອີລາຍ *ບຳອິກ*

ສາດສະດາໃນພຣະຄຳພີເດີມຜູ້ໄດ້ກັບຄືນມາໃນຍຸກສຸດທ້າຍ ເພື່ອມອບຂໍກະແຈແຫ່ງອຳນາດຂອງການຜະນຶກໃຫ້ແກ່ໂຈເຊັບສະມິດ ແລະ ອໍລິເວີ ຄາວເດີຣີ. ໃນວັນເວລາຂອງເພິ່ນ, ເອລີຢາໄດ້ປະຕິບັດສາດສະໜາກິດຢູ່ອານາຈັກພາກເໜືອຂອງອິດສະຣາເອນ (1 ກສ 17–22; 2 ກສ 1–2). ເພິ່ນມີສັດທາອັນຍິ່ງໃຫຍ່ໃນພຣະຜູ້ເປັນເຈົ້າ ແລະ ໄດ້ເຮັດສິ່ງມະຫັດສະຈັນຫລາຍຢ່າງ. ຕາມຄຳຂໍຮ້ອງຂອງເພິ່ນ, ພຣະເຈົ້າໄດ້ຢຸດຝົນເປັນເວລາສາມປີເຄິ່ງ. ເພິ່ນໄດ້ນຳເດັກນ້ອຍຜູ້ຊາຍຄົນໜຶ່ງໃຫ້ເປັນຄືນມາມີຊີວິດ ແລະ ໄດ້ເອີ້ນໄຟໃຫ້ລົງມາຈາກຟ້າສະຫວັນ (1 ກສ 17–18). ຊາວຢິວຍັງລໍຖ້າການກັບມາຂອງເອລີຢາຢູ່, ດັ່ງທີ່ມາລາກີໄດ້ທຳນາຍໄວ້ວ່າເພິ່ນຈະກັບມາ (ມລກ 4:5). ເພິ່ນຍັງເປັນແຂກຮັບເຊີນສະເໝີມາສຳລັບງານລ້ຽງປັດສະຄາຂອງຊາວຢິວຢູ່, ຊຶ່ງເຂົາເຈົ້າໄດ້ເປີດປະຕູຕ້ອນຮັບ ແລະ ຈັດຕັ່ງນັ່ງໄວ້ໃຫ້ເພິ່ນເປັນພິເສດ.

ສາດສະດາໂຈເຊັບ ສະມິດ ໄດ້ກ່າວວ່າ ເອລີຢາມີອຳນາດແຫ່ງການຜະນຶກຂອງຖານະປະໂລຫິດແຫ່ງເມນຄີເສເດັກ ແລະ ໄດ້ເປັນສາດສະດາຄົນສຸດທ້າຍທີ່ເຮັດເຊັ່ນນັ້ນກ່ອນວັນເວລາຂອງພຣະເຢຊູຄຣິດ. ເພິ່ນໄດ້ມາປະກົດຢູ່ເທິງພູແຫ່ງການປ່ຽນສະພາບພ້ອມກັບໂມເຊ ແລະ ໄດ້ມອບຂໍກະແຈຂອງຖານະປະໂລຫິດໃຫ້ແກ່ເປໂຕ, ຢາໂກໂບ, ແລະ ໂຢຮັນ (ມທ 17:3). ເພິ່ນໄດ້ມາປະກົດອີກ, ພ້ອມດ້ວຍໂມເຊ

ແລະ ຄົນ ອື່ນໆ, ໃນ ວັນທີ 3 ເດືອນ ເມສາ, 1836, ໃນ ພຣະວິຫານເຄີດແລນ ໂອໄຮໂອ ແລະ ໄດ້ມອບຂໍກະແຈອັນດຽວກັນນັ້ນໃຫ້ແກ່ ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ (ຄພ 110:13–16). ທຸກສິ່ງຢ່າງນີ້ແມ່ນເພື່ອຕຽມສຳລັບການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ, ດັ່ງທີ່ມີກ່າວໄວ້ຢູ່ໃນມາລາກີ 4:5–6.

ອຳນາດຂອງເອລີຢາ ຄືອຳນາດແຫ່ງການຜະນຶກຂອງຖານະປະໂລຫິດ ຊຶ່ງໂດຍສິ່ງທີ່ຖືກຜູກມັດ ຫລື ການປ່ອຍໃນແຜ່ນດິນໂລກກໍຖືກຜູກມັດ ຫລື ປ່ອຍໃນສະຫວັນ (ຄພ 128:8–18). ຜູ້ຮັບໃຊ້ທີ່ຖືກເລືອກໄວ້ຂອງພຣະຜູ້ເປັນເຈົ້າຢູ່ເທິງແຜ່ນດິນໂລກໃນທຸກວັນນີ້ມີອຳນາດແຫ່ງການຜະນຶກນີ້ ແລະ ເຮັດພິທີການຊ່ວຍໃຫ້ລອດຂອງພຣະກິດຕິຄຸນສຳລັບຄົນເປັນ ແລະ ຄົນຕາຍ (ຄພ 128:8).

ໄດ້ປິດຟ້າສະຫວັນ ແລະ ໄດ້ກິນອາຫານຈາກໂຕກາທີ່ນຳມາໃຫ້, **1 ກສ** 17:1–7. ໄດ້ບັນຊາຖ້ວຍຂອງແມ່ໝ້າຍບໍ່ໃຫ້ຂາດແປ້ງ ແລະ ໄຫບໍ່ໃຫ້ຂາດນ້ຳມັນ, **1 ກສ** 17:8–16. ໄດ້ນຳລູກຊາຍຂອງແມ່ໝ້າຍຄືນມາຈາກຄວາມຕາຍ, **1 ກສ** 17:17–24. ໄດ້ໄຊຊະນະຈາກພວກປະໂລຫິດຂອງພຣະບາອານ, **1 ກສ** 18:21–39. ສຽງເບົາ ແລະ ຄ່ອຍໄດ້ກ່າວກັບເພິ່ນ, **1 ກສ** 19:11–12. ຝູງມ້າໄຟແກ່ລົດມ້າໄຟຄັນໜຶ່ງໄດ້ເອົາເອລີຢາຂຶ້ນສູ່ສະຫວັນ, **2 ກສ** 2:11. ມາລາກີໄດ້ທຳນາຍເຖິງການກັບມາຂອງເພິ່ນໃນຍຸກສຸດທ້າຍ, **ມລກ** 4:5–6 (3 ນຟ 25:5).

ໄດ້ປະກົດຢູ່ໃນພຣະວິຫານເຄີດແລນໂອໄຮໂອໃນປີ 1836, **ຄພ** 110:13–16.

**ເອໂລຮິມ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ; ພຣະບິດາຜູ້ສະຖິດຢູ່ໃນສະຫວັນ

**ເອວາ.** *ເບິ່ງ* ການຕົກຂອງອາດາມ ແລະ ເອວາ; ອາດາມ; ເອເດນ *ນຳອີກ*

ຜູ້ຍິງຄົນທຳອິດທີ່ເຄີຍມີຊີວິດຢູ່ເທິງແຜ່ນດິນໂລກນີ້ (ປຖກ 2:21–25; 3:20). ນາງແມ່ນເມຍຂອງອາດາມ. ໃນພາສາເຮັບເຣີ ຊື່ນີ້ແປວ່າ "ຊີວິດ." ນາງໄດ້ຖືກຕັ້ງຊື່ໃຫ້ແນວນັ້ນເພາະນາງເປັນ "ແມ່ຂອງທຸກສິ່ງທັງປວງ" (ມຊ 4:26). ນາງ ແລະ ອາດາມ, ຊາຍຄົນທຳອິດ, ຈະໄດ້ຮັບລັດສະໝີພາບນິລັນດອນສຳລັບບົດບາດຂອງເຂົາເຈົ້າໃນການເຮັດໃຫ້ຄວາມກ້າວໜ້ານິລັນດອນເປັນໄປໄດ້ສຳລັບມະນຸດຊາດທັງປວງ.

ເອວາໄດ້ຖືກລໍ້ລວງ ແລະ ໄດ້ຮັບສ່ວນໝາກໄມ້ທີ່ຕ້ອງຫ້າມ, **ປຖກ** 3 (2 ນຟ 2:15–20; ມຊ 4).

ປະທານໂຈເຊັບ ແອັຟ ສະມິດ ໄດ້ເຫັນເອວາຢູ່ໃນພາບນິມິດຂອງເພິ່ນກ່ຽວກັບໂລກວິນຍານ, **ຄພ** 138:39.

ເອວາໄດ້ຮັບຮູ້ຄວາມຈຳເປັນຂອງການຕົກ ແລະ ຄວາມປິຕິຍິນດີແຫ່ງການໄຖ່, **ມຊ** 5:11–12.

**ແອກ.** *ເບິ່ງ* ສານຸສິດ *ນຳອີກ*

ອຸປະກອນທີ່ຄ້ອງໃສ່ຄໍຂອງສັດ ຫລື ຜູ້ຄົນເພື່ອທຽມເຂົາໄປນຳກັນ. ແອກຂອງພຣະຄຣິດເປັນສັນຍາລັກຂອງການເປັນສານຸສິດ, ໃນຂະນະທີ່ແອກແຫ່ງຄວາມເປັນທາດ ເປັນສັນຍາລັກຂອງການກົດຂີ່.

ແອກຂອງເຮົາກໍພໍເໝາະ, ແລະ ພາລະຂອງເຮົາກໍເບົາ, **ມທ** 11:29–30. ຢ່າຜູກພັນກັບຄົນທີ່ບໍ່ເຊື່ອໃນຖານະທີ່ບໍ່ສະເໝີກັນ, **2 ກຣທ** 6:14. ຢ່າຍອມປ່ອຍຕົວເອງໃຫ້ຕົກຢູ່ໃນແອກແຫ່ງຄວາມເປັນທາດ, **ຄລຕ** 5:1.

ພວກເຮົາບໍ່ປາດຖະໜາຈະເອົາໃຜມາສູ່ແອກແຫ່ງຄວາມເປັນທາດ, **ແອວ** 44:2.

ຄວາມທຸກທໍລະມານຂອງໄພ່ພົນຂອງພຣະເຈົ້າເປັນແອກເຫລັກ, ເປັນສາຍຮັດທີ່ແໜ້ນໜາ, ແລະ ເປັນໂສ້ ຂອງນະລົກ, **ຄພ** 123:1–3, 7–8.

**ແອມມິວເລັກ.** *ເບິ່ງ* ແອວມາ, ລູກຊາຍຂອງແອວມາ *ນຳອີກ*

ໃນພຣະຄຳພີມໍມອນ, ຄູ່ສອນສາດສະໜາຂອງແອວມາ, ລູກຊາຍຂອງແອວມາ.

ຖືກຢ້ຽມຢາມໂດຍທູດອົງໜຶ່ງ, **ແອວ** 8:20; 10:7. ໄດ້ຕ້ອນຮັບແອວມາເຂົ້າໄປໃນເຮືອນ

ຂອງລາວ, **ແອວ** 8:21–27. ໄດ້ສັ່ງສອນຜູ້ຄົນຂອງອຳໂມນໄນຮາດ້ວຍອຳນາດ, **ແອວ** 8:29–32; 10:1–11. ເປັນຜູ້ສືບເຊື້ອສາຍຂອງນີໄຟ, ລີໄຮ, ແລະ ມານາເຊ, **ແອວ** 10:2–3. ໃຫ້ຖ້ອຍຄຳເຖິງຄວາມຈິງ, **ແອວ** 10:4–11. ໄດ້ເອີ້ນຜູ້ຄົນໃຫ້ກັບໃຈ ແລະ ຖືກປະຕິເສດ, **ແອວ** 10:12–32. ໄດ້ໂຕ້ຖຽງກັບຊີເອສຣອມ, **ແອວ** 11:20–40. ໄດ້ສິດສອນເຖິງການຟື້ນຄືນຊີວິດ, ການພິພາກສາ, ແລະ ການຟື້ນຟູ, **ແອວ** 11:41–45. ຢາກຢຸດຢັ້ງການສັງຫານຜູ້ທີ່ເຊື່ອ, **ແອວ** 14:9–10. ໄດ້ຖືກຄຸມຂັງກັບແອວມາ, **ແອວ** 14:14–23. ໄດ້ເປັນອິດສະລະຈາກພັນທະການຜ່ານສັດທາ, **ແອວ** 14:24–29. ໃຫ້ຖ້ອຍຄຳເຖິງການຊົດໃຊ້, ຄວາມເມດຕາ, ແລະ ຄວາມຍຸດຕິທຳ, **ແອວ** 34:8–16. ໄດ້ສິດສອນກ່ຽວກັບການອະທິຖານ, **ແອວ** 34:17–28. ໄດ້ຊຸກຍູ້ຜູ້ຄົນບໍ່ໃຫ້ເລື່ອນວັນແຫ່ງການກັບໃຈ, **ແອວ** 34:30–41. ສັດທາຂອງແອວມາ ແລະ ແອມມິວເລັກເຮັດໃຫ້ຝາຄຸກພັງທະລາຍ, **ອທ** 12:13.

**ແອວເດີ.** *ເບິ່ງ* ຖານະປະໂລຫິດ; ຖານະປະໂລຫິດແຫ່ງເມນຄິເສເດັກ *ນຳອີກ*

ຄຳວ່າ ແອວເດີ ໄດ້ຖືກໃຊ້ໃນຫລາຍວິທີທາງໃນພຣະຄຣິສຕະທຳຄຳພີ. ໃນພຣະຄຳພີເດີມສ່ວນຫລາຍແລ້ວມັກຈະໝາຍເຖິງຜູ້ເຖົ້າແກ່ໃນເຜົ່າໃດເຜົ່າໜຶ່ງ, ຜູ້ຕາມປົກກະຕິແລ້ວ ໄດ້ຮັບພາລະເລື່ອງການປົກຄອງ (ປຖກ 50:7; ຢຊ 20:4; ນຣ 4:2; ມທ 15:2). ອາຍຸໄຂ ແລະ ປະສົບການຂອງພວກເພິ່ນ ເຮັດໃຫ້ຄຳແນະນຳຂອງເພິ່ນສຳຄັນຫລາຍ. ຕຳແໜ່ງຂອງພວກເພິ່ນບໍ່ຈຳເປັນຕ້ອງເປັນການເອີ້ນຂອງຖານະປະໂລຫິດ.

ກໍຍັງມີການແຕ່ງຕັ້ງແອວເດີໃນຖານະປະໂລຫິດແຫ່ງເມນຄິເສເດັກນຳອີກໃນສະໄໝຂອງພຣະຄຳພີເດີມ (ອພຍ 24:9–11). ໃນພຣະຄຳພີໃໝ່, ແອວເດີ ໄດ້ຖືກກ່າວເຖິງວ່າເປັນຕຳແໜ່ງຂອງຖານະປະໂລຫິດໃນສາດສະໜາຈັກ (ຢກບ 5:14–15). ໃນບັນດາຊາວນີໄຟກໍມີການແຕ່ງຕັ້ງແອວເດີໃນຖານະປະໂລຫິດຄືກັນ (ແອວ 4:7, 16; ມຣນ 3:1). ໃນສະໄໝນີ້, ໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີເປັນ ແອວເດີສອງຄົນທຳອິດທີ່ໄດ້ຖືກແຕ່ງຕັ້ງ (ຄພ 20:2–3).

ຕອນນີ້ ແອວເດີ ໄດ້ເປັນຕຳແໜ່ງທີ່ມອບໃຫ້ແກ່ຜູ້ດຳລົງຖານະປະໂລຫິດແຫ່ງເມນຄິເສເດັກທຸກຄົນ. ຍົກຕົວຢ່າງ, ຜູ້ສອນສາດສະໜາຜູ້ຊາຍຖືກເອີ້ນວ່າ ແອວເດີ. ພ້ອມນີ້, ອັກຄະສາວົກກໍເປັນແອວເດີ, ແລະ ມັນກໍເໝາະສົມທີ່ຈະກ່າວເຖິງສະມາຊິກໃນກຸ່ມອັກຄະສາວົກສິບສອງ ຫລື ກຸ່ມສາວົກເຈັດສິບໂດຍຕຳແໜ່ງນີ້ (ຄພ 20:38; 1 ປຕ 5:1). ໜ້າທີ່ຂອງແອວເດີທີ່ໄດ້ຖືກແຕ່ງຕັ້ງໃນສາດສະໜາຈັກທຸກວັນນີ້ໄດ້ຖືກມອບໃຫ້ໃນການເປີດເຜີຍຍຸກສຸດທ້າຍ (ຄພ 20:38–45; 42:44; 46:2; 107:12).

ໂມໄຊໄດ້ຊຽນຫາພວກແອວເດີຂອງອິດສະຣາເອນທຸກຄົນ, **ພບຍ** 31:9.

ບາຣະນາບາໄດ້ສົ່ງຄວາມຊ່ວຍເຫລືອໄປໃຫ້ບັນດາເຖົ້າແກ່ໃນສາດສະໜາຈັກ, **ກຈກ** 11:30. ໃນແຕ່ລະສາດສະໜາຈັກໄດ້ເລືອກຕັ້ງພວກເຖົ້າແກ່, **ກຈກ** 14:23 (ຕຕ 1:5). ມີຜູ້ໃດເຈັບໄຂ້ໄດ້ປ່ວຍ, ຈົ່ງໃຫ້ຜູ້ນັ້ນເຊີນບັນດາເຖົ້າແກ່ມາອະທິຖານ, **ຢກບ** 5:14.

ພວກແອວເດີໄດ້ຖືກແຕ່ງຕັ້ງໂດຍການວາງມື, **ແອວ** 6:1.

ພວກແອວເດີຕ້ອງໃຫ້ພອນເດັກນ້ອຍ, **ຄພ** 20:70. ພວກແອວເດີຕ້ອງດຳເນີນການປະຊຸມໂດຍພຣະວິນຍານສັກສິດ, **ຄພ** 46:2. ພວກແອວເດີຕ້ອງລາຍງານເລື່ອງລາວກ່ຽວກັບຄວາມພິທັກຮັກສາຂອງເຂົາ, **ຄພ** 72:5. ພວກແອວເດີຕ້ອງສັ່ງສອນພຣະກິດຕິຄຸນແກ່ປະຊາຊາດ, **ຄພ** 133:8.

**ແອວມາ, ລູກຊາຍຂອງແອວມາ.** *ເບິ່ງ* ໂມໄຊຢາ, ພວກລູກຊາຍຂອງ; ແອມມິວເລັກ; ແອວມາຜູ້ເປັນບິດາ *ນຳອີກ*

ໃນພຣະຄຳພີມໍມອນ, ຫົວໜ້າຜູ້ຕັດສິນຄົນທຳອິດ ແລະ ສາດສະດາໃນປະຊາຊາດນີໄຟ. ຕອນເປັນໜຸ່ມ ລາວໄດ້ພະຍາຍາມທີ່ຈະທຳລາຍສາດສະໜາຈັກ (ມຊຢ 27:8–10). ເຖິງຢ່າງໃດກໍຕາມ, ທູດໄດ້ມາປະກົດຕໍ່ລາວ ແລະ ລາວໄດ້ປ່ຽນໃຈເຫລື້ອມໃສຕໍ່ພຣະກິດຕິຄຸນ

(ມຊຍ 27:8–24; ແອວ 36:6–27). ຕໍ່ມາ ລາວໄດ້ສະລະຕຳແໜ່ງເປັນຫົວໜ້າຜູ້ຕັດສິນ ເພື່ອໄປສິດສອນຜູ້ຄົນ (ແອວ 4:11–20).

*ໜັງສື ແອວມາ:* ໜັງສືເຫລັ້ມ ໜຶ່ງອີກຕ່າງຫາກຢູ່ໃນພຣະຄຳພີມໍມອນ, ບັນຈຸຄຳຫຍໍ້ຈາກບັນທຶກຕ່າງໆຂອງສາດສະດາແອວມາ, ລູກຊາຍຂອງແອວມາ, ແລະ ຮີລາມັນ ລູກຊາຍຂອງເພິ່ນ. ເຫດການຕ່າງໆທີ່ໄດ້ອະທິບາຍຢູ່ໃນໜັງສືໄດ້ເກີດຂຶ້ນປະມານ 91 ເຖິງ 52 ປີກ່ອນ ຄ.ສ. ໜັງສືມີຢູ່ດ້ວຍກັນ 63 ບົດ. ບົດທີ 1–4 ບັນຍາຍເຖິງການກະບົດຂອງຜູ້ຕິດຕາມນີຮໍ ແລະ ອາມລິໄຊ ຕໍ່ຕ້ານຊາວນີໄຟ. ຜົນສະທ້ອນຂອງສົງຄາມເຫລົ່ານັ້ນແມ່ນເປັນການທຳລາຍທີ່ຮ້າຍແຮງທີ່ສຸດໃນປະຫວັດສາດຂອງຊາວນີໄຟທີ່ເຄີຍມີມາ. ບົດທີ 5–16 ບັນຈຸເລື່ອງລາວຂອງການເດີນທາງໄປສອນສາດສະໜາຂອງແອວມາໃນຕອນຕົ້ນ, ລວມທັງຄຳເທດສະໜາຂອງເພິ່ນເລື່ອງຜູ້ລ້ຽງທີ່ດີ (ແອວ 5) ແລະ ການສັ່ງສອນຂອງເພິ່ນກັບແອມມິວເລັກໃນເມືອງອຳໂມນໄນຮາ. ບົດທີ 17–27 ບັນຈຸບັນທຶກຂອງພວກລູກຊາຍຂອງໂມໄຊຢາ ແລະ ການປະຕິບັດສາດສະໜາກິດຂອງເຂົາເຈົ້າໃນບັນດາຊາວເລມັນ. ບົດທີ 28–44 ບັນຈຸຄຳເທດສະໜາທີ່ສຳຄັນທີ່ສຸດບາງຢ່າງຂອງແອວມາ. ໃນບົດທີ 32 ແອວມາໄດ້ປຽບທຽບພຣະຄຳໃສ່ກັບເມັດພືດ; ໃນບົດທີ 36 ເພິ່ນໄດ້ເລົ່າເລື່ອງການປ່ຽນໃຈເຫລື້ອມໃສຂອງເພິ່ນໃຫ້ຮີລາມັນລູກຊາຍຂອງເພິ່ນຟັງ. ບົດທີ 39–42 ບັນທຶກຄຳແນະນຳຂອງແອວມາຕໍ່ໂຄຣິອານທັນ ລູກຊາຍຂອງເພິ່ນ, ຜູ້ໄດ້ໄປພົວພັນກັບການລ່ວງລະເມີດທາງສິນທຳ; ຄຳເທດສະໜາທີ່ສຳຄັນນີ້ອະທິບາຍເຖິງຄວາມຍຸດຕິທຳ, ຄວາມເມດຕາ, ການຟື້ນຄືນພຣະຊົນ, ແລະ ການຊົດໃຊ້. ບົດທີ 45–63 ບັນຍາຍເຖິງສົງຄາມຕ່າງໆຂອງຊາວນີໄຟໃນຊ່ວງເວລານັ້ນ ແລະ ການຍ້າຍຖິ່ນຖານພາຍໃຕ້ ເຮກອດ. ຜູ້ນຳທີ່ຍິ່ງໃຫຍ່ເຊັ່ນ ນາຍທັບ ໂມໂຣໄນ, ທີອານຄຳ, ແລະ ລີໄຮ ໄດ້ຊ່ວຍປົກປັກຮັກສາຊາວນີໄຟ ໂດຍຜ່ານຄວາມກ້າຫານຂອງເຂົາເຈົ້າ ແລະ ການກະທຳໃນເວລາທີ່ເໝາະສົມ.

**ແອວມາຜູ້ເປັນບິດາ**

ສາດສະດາຊາວນີໄຟຄົນໜຶ່ງໃນພຣະຄຳພີມໍມອນ ຜູ້ໄດ້ຈັດຕັ້ງສາດສະໜາຈັກຂຶ້ນໃນວັນເວລາຂອງກະສັດໂນອາທີ່ຊົ່ວຮ້າຍ.

ໄດ້ເປັນປະໂລຫິດຄົນໜຶ່ງຂອງກະສັດໂນອາທີ່ຊົ່ວຮ້າຍ ແລະ ຜູ້ສືບຕະກຸນຂອງນີໄຟ, **ມຊຍ** 17:1–2. ເພາະໄດ້ຍິນ ແລະ ເຊື່ອອະບິນາໄດ, ຈຶ່ງຖືກກະສັດຂັບໄລ່ໜີ. ເພິ່ນໄດ້ໜີໄປ, ລີ້ຕົວຢູ່, ແລະ ໄດ້ຂຽນ ຂໍ້ຄວາມຂອງອະບິນາໄດໄວ້, **ມຊຍ** 17:3–4. ໄດ້ກັບໃຈ ແລະ ໄດ້ສິດສອນຖ້ອຍຄຳຂອງອະບິນາໄດ, **ມຊຍ** 18:1. ໄດ້ໃຫ້ບັບຕິສະມາທີ່ນ້ຳມໍມອນ, **ມຊຍ** 18:12–16. ໄດ້ຈັດຕັ້ງສາດສະໜາຈັກຂຶ້ນ, **ມຊຍ** 18:17–29. ໄດ້ມາເຖິງເຊຣາເຮັມລາພ້ອມດ້ວຍຜູ້ຄົນຂອງເພິ່ນ, **ມຊຍ** 24:25. ໄດ້ຮັບສິດອຳນາດເພື່ອດູແລສາດສະໜາຈັກ, **ມຊຍ** 26:8. ໄດ້ຕັດສິນ ແລະ ໄດ້ນຳພາສາດສະໜາຈັກ, **ມຊຍ** 26:34–39. ໄດ້ມອບຕຳແໜ່ງຂອງມະຫາປະໂລຫິດໃຫ້ແກ່ລູກຊາຍຂອງເພິ່ນ, **ແອວ** 4:4 (ມຊຍ 29:42; ແອວ 5:3).

**ອົງຊົງລິດອຳນາດຍິ່ງໃຫຍ່.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ນຳອີກ*

ລັກສະນະພິເສດຈຳເພາະແຫ່ງສະຫວັນເຖິງການມີອຳນາດທັງໝົດ (ປຖກ 18:14; ແອວ 26:35; ຄພ 19:1–3).

**ອົງດຽວທີ່ຖືກກຳເນີດ.** *ເບິ່ງ* ທີ່ຖືກກຳເນີດ; ພຣະເຢຊູຄຣິດ *ນຳອີກ*

ພຣະນາມໜຶ່ງອີກສຳລັບພຣະເຢຊູຄຣິດ. ພຣະອົງເປັນພຣະບຸດອົງດຽວທີ່ຖືກກຳເນີດຈາກພຣະບິດາ (ລກ 1:26–35; ຢຮ 1:14; 3:16; 1 ນຟ 11:18–20; 2 ນຟ 25:12; ແອວ 7:10; 12:33; ມຊ 7:62).

**ອົດທົນ, ຄວາມອົດທົນ.** *ເບິ່ງ* ຍາກລຳບາກ, ຄວາມຍາກລຳບາກ; ລໍ້ລວງ, ການລໍ້ລວງ; ອ່ອນໂຍນ, ຄວາມອ່ອນໂຍນ *ນຳອີກ*

ທີ່ຈະຍຶດໝັ້ນໃນຄຳສັນຍາວ່າຈະຈິງໃຈຕໍ່ພຣະບັນຍັດຂອງພຣະເຈົ້າ ເຖິງແມ່ນຈະມີການລໍ້ລວງ, ການກົງກັນຂ້າມ, ແລະ ຄວາມ

ຍາກ ລຳ ບາກ. ອົດ ທົນ ດ້ວຍ ຄວາມ ສະຫງົບ; ຄວາມ ສາ ມາດທີ່ຈະອົດທົນກັບ ຄວາມທຸກທໍ ລະມານ, ການໝິ່ນປະໝາດ, ຫລື ບາດເຈັບ ໂດຍທີ່ບໍ່ຈົ່ມວ່າ ຫລື ໂຕ້ຕອບ.

ຈົ່ງພັກຜ່ອນໃນພຣະຜູ້ເປັນເຈົ້າ, ແລະ ລໍຖ້າ ພຣະອົງດ້ວຍຄວາມອົດທົນ, **ພສສ** 37:7–8. ຜູ້ທີ່ມີດຽງບສະແດງໃຫ້ເຫັນເຖິງປັນຍາ, **ສພສ** 14:29.

ແຕ່ຜູ້ໃດທີ່ທົນໄດ້ຈົນເຖິງທີ່ສຸດຜູ້ນັ້ນຈະໄດ້ ລອດພົ້ນ, **ມທ** 10:22 (ມຣກ 13:13). ພວກເຂົາ ບໍ່ມີຮາກໃນຕົນເອງຈຶ່ງທົນຢູ່ບໍ່ໄດ້ດົນ, **ມຣກ** 4:17. ພວກເຈົ້າຈະຮັກສາຊີວິດຈິດໃຈຂອງ ເຈົ້າໄວ້ ດ້ວຍຄວາມອົດທົນພາກພຽນຂອງ ເຈົ້າ, **ລກ** 21:19. ພວກເຮົາຈະມີຄວາມຫວັງ ດ້ວຍຄວາມອົດທົນ ແລະ ຄວາມຊູໃຈດ້ວຍ ພຣະຄຳພີ, **ຣມ** 15:4. ຄວາມຮັກສູ້ທົນທຸກສິ່ງ, **1 ກຣທ** 13:7. ໃຫ້ເປັນເໝືອນຄົນເຫລົ່ານັ້ນ ທີ່ອາໄສຄວາມເຊື່ອ ແລະ ຄວາມພາກພຽນ ອົດທົນ ຈຶ່ງໄດ້ຮັບມໍລະດົກຕາມສັນຍາ, **ຮຣ** 6:12–15. ເມື່ອອັບຣາຮາມໄດ້ທົນຄອຍດ້ວຍ ຄວາມພາກພຽນແລ້ວ, ເພິ່ນຈຶ່ງໄດ້ຮັບຕາມ ພຣະສັນຍານັ້ນ, **ຮຣ** 6:15. ຈົ່ງໃຫ້ຄວາມໝັ້ນ ໃຈຂອງພວກເຈົ້ານັ້ນຍືນຍົງຕະຫລອດໄປ ເພື່ອວ່າພວກເຈົ້າຈະໄດ້ເປັນຄົນສຳເລັດ ແລະ ຄົບຖ້ວນ, **ຢກບ** 1:2–4. ເຈົ້າທັງຫລາຍໄດ້ຍິນ ເລື່ອງຄວາມໝັ້ນໃຈຂອງທ່ານໂຢບ, **ຢກບ** 5:11.

ຖ້າ ຫາກ ພວກ ເຂົາ ອົດ ທົນ ຈົນ ເຖິງ ທີ່ ສຸດ ພວກເຂົາຈະຖືກຍົກຂຶ້ນໃນວັນສຸດທ້າຍ, **1 ນຟ** 13:37. ຖ້າຫາກພວກເຈົ້າຈະເຊື່ອຟັງພຣະບັນ ຍັດ, ແລະ ອົດທົນຈົນເຖິງທີ່ສຸດ, ພວກເຈົ້າ ຈະລອດໃນວັນສຸດທ້າຍ, **1 ນຟ** 22:31 (ແອວ 5:13). ຖ້າຫາກພວກທ່ານຈະມຸ້ງໜ້າ, ຊື່ນ ຊົມດ້ວຍພຣະຄຳຂອງພຣະຄຣິດ, ແລະ ອົດ ທົນຈົນເຖິງທີ່ສຸດ, ພວກທ່ານຈະມີຊີວິດນິລັນ ດອນ, **2 ນຟ** 31:20 (3 ນຟ 15:9; ຄພ 14:7). ພວກເຂົາໄດ້ຍອມຮັບຢ່າງເບີກບານມ່ວນຊື່ນ ແລະ ດ້ວຍຄວາມອົດທົນຕໍ່ພຣະປະສົງທັງໝົດ ຂອງພຣະຜູ້ເປັນເຈົ້າ, **ມຊຢ** 24:15. ລູກໄດ້ ຮັບເອົາສິ່ງເຫລົ່ານີ້ໄວ້ທັງໝົດດ້ວຍຄວາມອົດ ທົນ ຍ້ອນວ່າພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ກັບ ລູກ, **ແອວ** 38:4–5. ຜູ້ໃດທີ່ຮັບນາມຂອງເຮົາ, ແລະ ອົດທົນຈົນເຖິງທີ່ສຸດ, ຜູ້ນັ້ນຈະລອດ, **3 ນຟ** 27:6.

ຄົນໃດກໍຕາມທີ່ອົດທົນຕໍ່ສາດສະໜາຈັກ ຂອງເຮົາຈົນເຖິງທີ່ສຸດ, ຄົນນັ້ນເຮົາຈະສະຖາ ປະນາໄວ້ເທິງດານຫີນຂອງເຮົາ, **ຄພ** 10:69. ຄົນທີ່ອົດທົນໃນສັດທາຈະເອົາຊະນະໂລກ, **ຄພ** 63:20, 47. ຈົ່ງດຳເນີນຕໍ່ໄປດ້ວຍຄວາມ ອົດທົນ ຈົນກວ່າພວກເຈົ້າຈະຖືກເຮັດໃຫ້ດີ ພ້ອມ, **ຄພ** 67:13. ພຣະບັນລັງ ແລະ ການ ຄອບຄອງ ຈະຖືກມອບໃຫ້ແກ່ທຸກຄົນທີ່ອົດທົນ ຢ່າງກ້າຫານເພື່ອພຣະກິດຕິຄຸນຂອງພຣະເຢຊູ ຄຣິດ, **ຄພ** 121:29.

**ອົບພະຍົບ.** *ເບິ່ງ* ເພັນຕາຕຸກ *ບຳອິກ*

ໜັງສືເຫລັ້ມໜຶ່ງທີ່ຂຽນໂດຍໂມເຊໃນພຣະ ຄຳພີເດີມ ທີ່ບັນຍາຍເຖິງການໜີອອກຈາກ ເອຢິບຂອງຊາວອິດສະຣາເອນ. ປະຫວັດສາດ ຕອນຕົ້ນຂອງອິດສະຣາເອນທີ່ໄດ້ບັນທຶກໄວ້ ຢູ່ໃນໜັງສືອົບພະຍົບ ສາມາດແຍກອອກເປັນ ສາມພາກ: (1) ການເປັນຂ້າທາດຂອງຜູ້ຄົນຢູ່ ໃນເອຢິບ, (2) ການຈາກເອຢິບໄປຂອງເຂົາ ເຈົ້າ ພາຍໃຕ້ການນຳພາຂອງໂມເຊ, ແລະ (3) ຄວາມອຸທິດຕົນໃນການຮັບໃຊ້ຂອງເຂົາເຈົ້າຕໍ່ ພຣະເຈົ້າໃນຊີວິດທາງສາດສະໜາ ແລະ ທາງ ການເມືອງຂອງເຂົາເຈົ້າ.

ພາກທຳອິດ, ບົດທີ 1:1–15:21, ອະທິບາຍ ເຖິງການຂົ່ມເຫັງຂອງຊາວອິດສະຣາເອນໃນ ປະເທດເອຢິບ; ປະຫວັດສາດຕອນຕົ້ນ ແລະ ການເອີ້ນຂອງໂມເຊ; ການອົບພະຍົບ ແລະ ການຈັດຕັ້ງງານປັດສະຄາ; ແລະ ການເດີນ ທາງໄປຫາທະເລແດງ, ຄວາມພິນາດຂອງ ກອງທັບຂອງຟາລາໂອ, ແລະ ເພງໄຊຊະນະ ຂອງໂມເຊ.

ພາກທີສອງ, ບົດທີ 15:22–18:27, ບອກ ເຖິງການໄຖ່ຊາວອິດສະຣາເອນ ແລະ ເຫດ ການທີ່ເກີດຂຶ້ນລະຫວ່າງການເດີນທາງຈາກ ທະເລແດງ ໄປຫາພູຊີນາຍ; ນ້ຳຂົມທີ່ມາຣາ, ການໄດ້ຮັບນົກຂຸ້ມ ແລະ ເຂົ້າມານາ, ການຮັກ ສາວັນຊະບາໂຕ, ຂອງປະທານທີ່ໜ້າອັດສະ

ຈັບໃຈເລື່ອງນ້ຳທີ່ເຣຟີດີມ, ແລະ ການສູ້ຮົບຢູ່ທີ່ນັ້ນກັບຊາວອາມາລະໄຄ; ການມາເຖິງຄ້າຍຂອງ ເຢທະໂຣ ແລະ ຄຳ ແນະນຳ ຂອງລາວກ່ຽວກັບການປົກຄອງຜູ້ຄົນຝ່າຍພົນລະເຮືອນ.

ພາກທີສາມ, ບົດທີ 19–40, ກ່ຽວກັບການອຸທິດຖວາຍຂອງຊາວອິດສະຣາເອນຕໍ່ການຮັບໃຊ້ພຣະເຈົ້າ ລະຫວ່າງເຫດການທີ່ສັກສິດຢູ່ທີ່ພູຊີນາຍ. ພຣະຜູ້ເປັນເຈົ້າໄດ້ຕັ້ງຜູ້ຄົນໄວ້ເປັນອານາຈັກໜຶ່ງຂອງປະໂລຫິດ ແລະ ປະຊາຊາດທີ່ສັກສິດ; ພຣະອົງໄດ້ມອບພຣະບັນຍັດສິບປະການ; ແລະ ພຣະອົງໄດ້ໃຫ້ຄຳແນະນຳກ່ຽວກັບ ສະຖານທີ່ນະມັດສະການ, ເຄື່ອງໃຊ້, ແລະ ການນະມັດສະການໃນນັ້ນ. ແລ້ວຈາກນັ້ນເປັນເລື່ອງລາວກ່ຽວກັບການເຮັດບາບຂອງຜູ້ຄົນໃນການນະມັດສະການງົວຄຳ, ແລະ ສຸດທ້າຍແມ່ນເລື່ອງລາວກ່ຽວກັບການສ້າງສະຖານທີ່ນະມັດສະການ ແລະ ສະບຽງອາຫານສຳລັບພິທີການ.

**ໂອບາດີຢາ**

ສາດສະດາໃນພຣະຄຳພີເດີມ ຜູ້ໄດ້ບອກລ່ວງໜ້າກ່ຽວກັບຄວາມພິນາດຂອງເອໂດມ. ເພິ່ນໄດ້ທຳນາຍ ອາດເປັນໃນລະຫວ່າງການປົກຄອງຂອງເຢໂຮຣາມ (848–844 ປີ ກ່ອນ ຄ.ສ.) ຫລື ລະຫວ່າງການຮຸກຮານຂອງຊາວບາບີໂລນ 586 ປີ ກ່ອນ ຄ.ສ.

*ພຣະທຳ ໂອບາດີຢາ:* ໜັງສືເຫລັ້ມໜຶ່ງໃນພຣະຄຳພີເດີມ. ມັນມີພຽງບົດດຽວ. ໃນນັ້ນ, ໂອບາດີຢາໄດ້ຂຽນກ່ຽວກັບການຕົກຂອງເອໂດມ ແລະ ໄດ້ທຳນາຍວ່າ ພຣະຜູ້ຊ່ວຍໃຫ້ລອດຈະປະທັບຢູ່ເທິງພູຊີໂອນ.

**ໂອເບັດ.** *ເບິ່ງ* ໂບອາດ; ຣຸດ *ນຳອີກ*

ໃນພຣະຄຳພີເດີມ, ລູກຊາຍຂອງໂບອາດກັບນາງຣຸດ ແລະ ເປັນບິດາຂອງເຢຊີ, ຜູ້ໄດ້ກາຍເປັນບິດາຂອງກະສັດດາວິດ (ນຣ 4:13–17, 21–22).

**ໂອເມຄາ.** *ເບິ່ງ* ພຣະເຢຊູຄຣິດ; ອາລະຟາ ແລະ ໂອເມຄາ

**ອອກສຽງ.** *ເບິ່ງ* ເຫັນຊອບນຳກັນ

**ອ່ອນໂຍນ, ຄວາມອ່ອນໂຍນ.** *ເບິ່ງ* ຖ່ອມຕົນ, ຄວາມຖ່ອມຕົນ; ຫົວໃຈທີ່ຊອກຊ້ຳ; ອົດທົນ, ຄວາມອົດທົນ *ນຳອີກ*

ຢຳເກງພຣະເຈົ້າ, ຊອບທຳ, ຖ່ອມຕົວ, ສອນງ່າຍ, ແລະ ອົນທົນກັບຄວາມທຸກທໍລະມານ. ຄົນທີ່ອ່ອນໂຍນຈະຕິດຕາມຄຳສອນຂອງພຣະກິດຕິຄຸນ.

ໂມເຊ ເປັນຄົນອ່ອນໂຍນ, **ຈບຊ** 12:3. ຜູ້ອ່ອນໂຍນຈະໄດ້ຮັບດິນແດນເປັນກຳມະສິດ, **ພສສ** 37:11 (ມທ 5:5; 3 ນຟ 12:5; ຄພ 88:17). ຈົ່ງຫັນມາຫາພຣະຜູ້ເປັນເຈົ້າເສຍເຖີດ, ເຈົ້າທັງຫລາຍທີ່ອ່ອນໂຍນ; ຈົ່ງເຮັດສິ່ງທີ່ຖືກຕ້ອງ, ຈົ່ງສະແຫວງຫາຄວາມອ່ອນໂຍນ, **ຊຟຢ** 2:3 (1 ຕມທ 6:11).

ຈົ່ງຮຽນຮູ້ຈາກເຮົາ ເພາະວ່າເຮົາອ່ອນໂຍນ ແລະ ຕ່ຳຕ້ອຍໃນໃຈ, **ມທ** 11:29. ຜົນຂອງພຣະວິນຍານຄືຄວາມອ່ອນໂຍນ, **ຄລຕ** 5:22–23. ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຕ້ອງມີໃຈເມດຕາ, ເປັນຜູ້ສິດສອນທີ່ດີ, ມີໃຈອົດທົນ, ແກ້ໄຂຄວາມຄິດເຫັນຝ່າຍກົງກັນຂ້າມດ້ວຍຄວາມສຸພາບອ່ອນໂຍນ, **2 ຕມທ** 2:24–25. ຈິດໃຈອ່ອນໂຍນ ແລະ ສະຫງົບມຽມຄົມ ຊຶ່ງເປັນສິ່ງທີ່ມີຄ່າສູງໃນສາຍພຣະເນດຂອງພຣະເຈົ້າ, **1 ປຕ** 3:4.

ປະຖິ້ມມະນຸດທີ່ມີຈິດໃຈທຳມະດາ ແລະ ກາຍເປັນຄົນອ່ອນໂຍນ, **ມຊຢ** 3:19 (ແອວ 13:27–28). ພຣະເຈົ້າໄດ້ບັນຊາຮີລາມັນໃຫ້ສອນຜູ້ຄົນໃຫ້ເປັນຄົນອ່ອນໂຍນ, **ແອວ** 37:33. ຄຸນງາມຄວາມດີຂອງພຣະຜູ້ເປັນເຈົ້າພຽງພໍສຳລັບຄົນທີ່ອ່ອນໂຍນ, **ອທ** 12:26. ທ່ານມີສັດທາໃນພຣະຄຣິດ ເພາະຄວາມອ່ອນໂຍນຂອງທ່ານ, **ມຣນ** 7:39. ບໍ່ມີຄົນໃດເປັນທີ່ຍອມຮັບຕໍ່ພຣະພັກຂອງພຣະເຈົ້າ ນອກຈາກຜູ້ທີ່ອ່ອນໂຍນ ແລະ ຕ່ຳຕ້ອຍໃນໃຈ, **ມຣນ** 7:44. ການປົດບາບນຳມາຊຶ່ງຄວາມອ່ອນໂຍນ, ແລະ ເພາະຄວາມອ່ອນໂຍນ ການມາຢ້ຽມຢາມຂອງພຣະວິນຍານບໍລິສຸດຍ່ອມມາເຖິງ, **ມຣນ** 8:26.

ຈົ່ງເດີນໄປໃນຄວາມອ່ອນໂຍນແຫ່ງພຣະວິນຍານຂອງເຮົາ, **ຄພ** 19:23. ຈົ່ງປົກຄອງຄອບຄົວຂອງເຈົ້າດ້ວຍຄວາມອ່ອນໂຍນ, **ຄພ**

31:9. ອຳນາດ ແລະ ອິດທິພົນຂອງຖານະປະໂລຫິດ ສາມາດດຳລົງຮັກສາໄວ້ ໂດຍຄວາມສຸພາບ ແລະ ຄວາມອ່ອນໂຍນ, **ຄພ** 121:41.

**ອ່ອນແອ, ຄວາມອ່ອນແອ.** *ເບິ່ງ* ຖ່ອມຕົນ, ຄວາມຖ່ອມຕົນ *ນຳອີກ*

ສະພາບຂອງຄວາມເປັນມະຕະ ແລະ ຂາດຄວາມສາມາດ, ຄວາມເຂັ້ມແຂງ, ຫລື ຄວາມຊຳນານ. ຄວາມອ່ອນແອເປັນສະພາວະຂອງການເປັນຢູ່. ທຸກຜູ້ຄົນມີຄວາມອ່ອນແອ, ແລະພຽງແຕ່ໂດຍພຣະຄຸນຂອງພຣະເຈົ້າເທົ່ານັ້ນ ທີ່ພວກເຂົາຈະໄດ້ຮັບອຳນາດທີ່ຈະເຮັດຄວາມຊອບທຳ (ຢຄ 4:6–7). ຄວາມອ່ອນແອນີ້ ສະແດງໃຫ້ປະຈັກ ໃນພາກສ່ວນທີ່ອ່ອນແອ ຫລື ຄວາມບໍ່ແຂງແຮງຂອງບຸກຄົນ.

ຈົ່ງໃຫ້ກຳລັງຜູ້ທີ່ອິດເມື່ອຍ, **ອຊຢ** 35:3–4. ຈິດໃຈພ້ອມຢູ່ແລ້ວກໍຈິງ, ແຕ່ຮ່າງກາຍກໍອ່ອນແຮງ, **ມທ** 26:41 (ມຣກ 14:38).

ແຕ່ຂ້າພະເຈົ້າຂໍແກ້ຕົວວ່າມັນເປັນເພາະຄວາມອ່ອນແອທີ່ມີຢູ່ກັບຂ້າພະເຈົ້າອັນເປັນເລື່ອງຂອງເນື້ອໜັງ, **1 ນຟ** 19:6. ຂ້າພະເຈົ້າໄດ້ຮັບບັນຊາໃຫ້ບັນທຶກເລື່ອງເຫລົ່ານີ້, ເຖິງແມ່ນຂ້າພະເຈົ້າອ່ອນແອ, **2 ນຟ** 33:11. ຂໍຢ່າພຣະພິໂລດຂ້າໃຊ້ຂອງພຣະອົງເລີຍ ຍ້ອນວ່າຄວາມອ່ອນແອຂອງລາວ, **ອທ** 3:2. ຄົນຕ່າງຊາດຈະເຍາະເຍີ້ຍສິ່ງເຫລົ່ານີ້ ເພາະຄວາມອ່ອນແອຂອງການຂຽນຂອງພວກຂ້ານ້ອຍ, **ອທ** 12:23–25, 40. ເຮົາຈະສະແດງໃຫ້ເຂົາເຫັນຄວາມອ່ອນແອຂອງເຂົາ, **ອທ** 12:27–28. ຍ້ອນວ່າເຈົ້າເຫັນຄວາມອ່ອນແອຂອງເຈົ້າເອງ ເຈົ້າຈຶ່ງຖືກເຮັດໃຫ້ເຂັ້ມແຂງຂຶ້ນ, **ອທ** 12:37.

ຄົນທີ່ອ່ອນແອໃນບັນດາພວກເຈົ້າຈະຖືກເຮັດໃຫ້ເຂັ້ມແຂງ, **ຄພ** 50:16. ພຣະເຢຊູຄຣິດຮູ້ຈັກຄວາມອ່ອນແອຂອງມະນຸດ, **ຄພ** 62:1.

**ອອມເນີ.** *ເບິ່ງ* ໂມໄຊຢາ, ພວກລູກຊາຍຂອງ; ໂມໄຊຢາ, ລູກຊາຍຂອງເບັນຢາມິນ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນໜຶ່ງຂອງກະສັດໂມໄຊຢາ. ອອມເນີໄດ້ໄປກັບພວກອ້າຍນ້ອງຂອງລາວ ເພື່ອສັ່ງສອນຊາວເລມັນ (ມຊຢ 27:8–11, 34–37; 28:1–9).

**ອອມໄນ**

ຜູ້ຮັກສາບັນທຶກຊາວນີໄຟໃນພຣະຄຳພີມໍມອນ ຜູ້ໄດ້ຂຽນປະມານ 361 ປີ ກ່ອນ ຄ.ສ. (ຈຣ 1:15; ອມນ 1:1–3).

*ໜັງສືອອມໄນ:* ໜັງສືເຫລັ້ມໜຶ່ງທີ່ແປຈາກແຜ່ນຈາລຶກນ້ອຍຂອງນີໄຟ ໃນພຣະຄຳພີມໍມອນ. ໜັງສືເຫລັ້ມນີ້ມີພຽງແຕ່ບົດດຽວເທົ່ານັ້ນ, ຊຶ່ງບັນຈຸເລື່ອງລາວກ່ຽວກັບສົງຄາມໃນບັນດາຊາວນີໄຟ ແລະ ຊາວເລມັນ. ອອມໄນໄດ້ຂຽນພຽງ ສາມຂໍ້ທຳອິດ ໃນປຶ້ມນີ້. ແລ້ວແຜ່ນຈາລຶກໄດ້ຖືກສົ່ງຕໍ່ກັນໄປຈາກ ອາມາຣອນ, ເຄມິດ, ອະບິນາໂດມ, ແລະ ໃນທີ່ສຸດ ອາມາລະໄຄ. ອາມາລະໄຄໄດ້ເອົາແຜ່ນຈາລຶກໄປໃຫ້ກະສັດເບັນຢາມິນ, ກະສັດຂອງເຊຣາເຮັມລາ.

**ເອີ້ນ, ການເອີ້ນ, ຖືກເອີ້ນຈາກພຣະເຈົ້າ, ຕຳແໜ່ງ.** *ເບິ່ງ* ສິດອຳນາດ; ແຕ່ງຕັ້ງ, ການແຕ່ງຕັ້ງ; ຜູ້ທີ່ຖືກເລືອກ; ພິທັກຮັກສາ, ຜູ້ພິທັກຮັກສາ, ການພິທັກຮັກສາ; ເລືອກ, ໄດ້ເລືອກ, ຖືກເລືອກ *ນຳອີກ*

ການຖືກເອີ້ນຈາກພຣະເຈົ້າຄືການຖືກກຳນົດ ຫລື ຖືກເຊື້ອເຊີນຈາກພຣະອົງ ຫລື ຈາກຜູ້ນຳທີ່ຖືກຕ້ອງຂອງ ສາດສະໜາຈັກ ເພື່ອຮັບໃຊ້ໃນວິທີທາງທີ່ພິເສດ.

ເພິ່ນໄດ້ວາງມືລົງເທິງຫົວລາວ ແລະ ປະກາດການແຕ່ງຕັ້ງໃຫ້ລາວ, **ຈບຊ** 27:23. ເຮົາໄດ້ແຕ່ງຕັ້ງເຈົ້າໃຫ້ເປັນສາດສະດາ, **ຢມຢ** 1:5. ເຮົາໄດ້ເລືອກເອົາພວກເຈົ້າ ແລະ ແຕ່ງຕັ້ງເຈົ້າທັງຫລາຍ, **ຢຮ** 15:16. ໂປໂລໄດ້ຖືກເອີ້ນໃຫ້ເປັນອັກຄະສາວົກ, **ຣມ** 1:1. ບໍ່ທ່ອນມີຜູ້ໃດຕັ້ງຕົນເອງຢູ່ໃນຕຳແໜ່ງນີ້, ແຕ່ເປັນຜູ້ຖືກເອີ້ນຈາກພຣະເຈົ້າ, **ຮຣ** 5:4. ພຣະເຢຊູໄດ້ຖືກເອີ້ນຈາກພຣະເຈົ້າ ຕາມລະບຽບຂອງເມນຄີເສເດັກ, **ຮຣ** 5:10.

ເຮົາຖືກເອີ້ນໃຫ້ມາສັ່ງສອນພຣະຄຳຂອງພຣະເຈົ້າຕາມວິນຍານແຫ່ງການເປີດເຜີຍ ແລະ ການທຳນາຍ, **ແອວ** 8:24. ປະໂລຫິດໄດ້ຖືກເອີ້ນ ແລະ ຖືກຕຽມໄວ້ນັບຕັ້ງແຕ່ການວາງຮາກຖານຂອງໂລກ, **ແອວ** 13:3.

ຖ້າເຈົ້າມີຄວາມປາດຖະໜາທີ່ຈະຮັບໃຊ້ພຣະເຈົ້າ ເຈົ້າກໍໄດ້ຖືກເອີ້ນ, **ຄພ** 4:3. ຈົ່ງຍຶດໝັ້ນໃນວຽກງານ ຊຶ່ງວຽກງານນັ້ນເຮົາໄດ້ເອີ້ນເຈົ້າ, **ຄພ** 9:14. ເຈົ້າບໍ່ຄວນຄິດວ່າ ເຈົ້າຖືກເອີ້ນໃຫ້ສັ່ງສອນ ຈົນກວ່າເຈົ້າຖືກເອີ້ນ, **ຄພ** 11:15. ແອວເດີໄດ້ຮັບການເອີ້ນເພື່ອເຮັດໃຫ້ການເຕົ້າໂຮມຜູ້ທີ່ຖືກເລືອກໄວ້ເກີດຂຶ້ນ, **ຄພ** 29:7. ຈະບໍ່ຖືກມອບໃຫ້ແກ່ຄົນໃດເພື່ອໄປສັ່ງສອນພຣະກິດຕິຄຸນຂອງເຮົາ, ຫລື ເພື່ອເສີມສ້າງສາດສະໜາຈັກຂອງເຮົາ, ຍົກເວັ້ນແຕ່ເຂົາຈະໄດ້ຮັບການແຕ່ງຕັ້ງ, **ຄພ** 42:11. ມີຫລາຍຄົນໄດ້ຖືກເອີ້ນ, ແຕ່ມີໜ້ອຍຄົນໄດ້ຖືກເລືອກ, **ຄພ** 121:34.

ມະນຸດຕ້ອງໄດ້ຖືກເອີ້ນຈາກພຣະເຈົ້າ, **ຫຼຊ** 1:5.

**ເອີ້ນ, ການເອີ້ນ ແລະ ການເລືອກ.** *ເບິ່ງ* ເລືອກ, ການເລືອກ *ບຳອິກ*

ຜູ້ຕິດຕາມທີ່ຊອບທຳຂອງພຣະຄຣິດສາມາດຢູ່ໃນບັນດາຜູ້ທີ່ຖືກເລືອກ ຊຶ່ງໄດ້ຮັບຄວາມໝັ້ນໃຈວ່າຈະໄດ້ຮັບຄວາມສູງສົ່ງ. ການເອີ້ນ ແລະ ການເລືອກນີ້ເລີ່ມຕົ້ນດ້ວຍການກັບໃຈ ແລະ ການບັບຕິສະມາ. ມັນສົມບູນ ເມື່ອເຂົາ "ດຳເນີນໄປໜ້າ, ຊື່ນຊົມກັບພຣະຄຳຂອງພຣະຄຣິດ, ແລະ ອົດທົນຈົນເຖິງທີ່ສຸດ" (2 ນຟ 31:19–20). ພຣະຄຳພີເອີ້ນຂັ້ນຕອນນີ້ວ່າເປັນການເຮັດໃຫ້ເປັນໄປຕາມການເອີ້ນ ແລະ ການເລືອກຂອງເຮົາ (2 ປຕ 1:4–11; ຄພ 131:5–6).

ພວກເຈົ້າຈະເປັນປະຊາຊົນທີ່ເຮົາເລືອກໄວ້ໃນຖານະປະໂລຫິດ, **ອພຍ** 19:5–6 (ພນມ 1:6).

ພຣະເຈົ້າໄດ້ເລືອກເອົາຜູ້ທີ່ຖືກເລືອກໄວ້ເພື່ອຄວາມລອດຕັ້ງແຕ່ຕົ້ນ, **2 ທສນ** 2:13. ຈົ່ງອົດສາພາກພຽນ ເພື່ອເຮັດໃຫ້ເປັນໄປຕາມການເອີ້ນ ແລະ ການເລືອກຂອງທ່ານ, **2 ປຕ** 1:10.

ພຣະຜູ້ເປັນເຈົ້າຈະຜະນຶກຕົວພວກທ່ານໄວ້ເປັນຂອງພຣະອົງ, **ມຊຢ** 5:15. ເຮົາເຮັດພັນທະສັນຍາກັບເຈົ້າວ່າ ເຈົ້າຈະມີຊີວິດນິລັນດອນ, **ມຊຢ** 26:20.

ຜູ້ດຳລົງຖານະປະໂລຫິດທີ່ຊື່ສັດຈະກາຍເປັນຂອງສາດສະໜາຈັກ ແລະ ອານາຈັກ, ແລະ ເປັນຜູ້ຖືກເລືອກໄວ້ຂອງພຣະເຈົ້າ, **ຄພ** 84:33–34. ຄຳຂອງການທຳນາຍທີ່ແນ່ນອນແທ້ໆໝາຍເຖິງການທີ່ຮູ້ວ່າເຂົາຖືກຜະນຶກໄວ້ສູ່ຊີວິດນິລັນດອນ, **ຄພ** 131:5–6. ເຮົາຜະນຶກຄວາມສູງສົ່ງໄວ້ເທິງເຈົ້າ, **ຄພ** 132:49.

**ເອື້ອຍນ້ອງ.** *ເບິ່ງ* ຜູ້ຍິງ, ກຸ່ມຜູ້ຍິງ; ພີ່ນ້ອງ, ບຣະເດີ ຫລື ອ້າຍນ້ອງ; ມະນຸດ *ບຳອິກ*

ໃນຖານະລູກໆຂອງພຣະບິດາເທິງສະຫວັນ, ຊາຍ ແລະ ຍິງທຸກຄົນ ເປັນອ້າຍເອື້ອຍນ້ອງກັນທາງວິນຍານ. ໃນ ສາດສະໜາຈັກ, ສະມາຊິກ ແລະ ໝູ່ເພື່ອນຜູ້ຍິງຂອງສາດສະໜາຈັກ ມັກຖືກເອີ້ນວ່າ ເອື້ອຍນ້ອງ.

ຜູ້ໃດທີ່ປະຕິບັດຕາມນ້ຳພຣະໄທຂອງພຣະບິດາຂອງເຮົາ, ຜູ້ນັ້ນແຫລະເປັນນ້ອງຊາຍ ແລະ ນ້ອງສາວຂອງເຮົາ, **ມທ** 12:50 (ມຣກ 3:35).

ກົດຄວບຄຸມການສາລະພາບບາບລະຫວ່າງອ້າຍເອື້ອຍນ້ອງໃນສາດສະໜາຈັກໄດ້ຖືກຈັດຕັ້ງໄວ້, **ຄພ** 42:88–93.

**ອຳນາດ.** *ເບິ່ງ* ສິດອຳນາດ; ຖານະປະໂລຫິດ *ບຳອິກ*

ຄວາມສາມາດທີ່ຈະເຮັດບາງສິ່ງ. ການມີອຳນາດເໜືອບາງຄົນ ຫລື ບາງສິ່ງ ຄືການມີຄວາມສາມາດທີ່ຈະຄວບຄຸມ ຫລື ບັນຊາຄົນນັ້ນ ຫລື ສິ່ງນັ້ນ. ໃນພຣະຄຳພີ, ສ່ວນຫລາຍແລ້ວ ອຳນາດມັກຈະພົວພັນກັບອຳນາດຂອງພຣະເຈົ້າ ຫລື ອຳນາດຂອງສະຫວັນ. ສ່ວນຫລາຍແລ້ວມັນພົວພັນຢ່າງໃກ້ຊິດກັບສິດອຳນາດຂອງຖານະປະໂລຫິດ, ຊຶ່ງເປັນການອະນຸຍາດ ຫລື ໃຫ້ມີສິດທີ່ຈະກະທຳເພື່ອພຣະເຈົ້າ.

ແຕ່ທີ່ເຮົາໃຫ້ເຈົ້າຍັງມີຊີວິດຢູ່ ກໍເພື່ອໃຫ້ເຈົ້າໄດ້ເຫັນອຳນາດຂອງເຮົາ, **ອພຍ** 9:16. ພຣະເຈົ້າເປັນທີ່ເພິ່ງອັນເຂັ້ມແຂງຂອງຂ້ານ້ອຍ, **2 ຊມອ** 22:33. ຢ່າເກັບຄວາມດີໄວ້ຈາກຜູ້ທີ່ສົມຄວນຈະໄດ້ຮັບ ໃນເມື່ອສິ່ງນີ້ຢູ່ໃນອຳນາດ

ຂອງເຈົ້າ, **ສພສ** 3:27. ຂ້າພະເຈົ້າເຕັມໄປດ້ວຍ ພຣະ ວິນ ຍານ ຕະຫລອດ ທັງ ອຳນາດ ຂອງ ພຣະຜູ້ເປັນເຈົ້າ, **ມກ** 3:8.

ອຳນາດທັງໝົດ ໃນສະຫວັນ ແລະ ທີ່ແຜ່ນດິນໂລກ ໄດ້ມອບໃຫ້ແກ່ເຮົາແລ້ວ, **ມທ** 28:18. ພວກເຂົາທຸກຄົນຕ່າງກໍປະຫລາດໃຈ ໃນຄຳສອນຂອງພຣະອົງ ເພາະພຣະອົງສອນດ້ວຍອຳນາດ, **ລກ** 4:32. ພວກເຈົ້າຕ້ອງເຝົ້າຄອຍຢູ່ໃນນະຄອນ ຈົນກວ່າອຳນາດຈາກເບື້ອງເທິງລົງມາເທິງພວກເຈົ້າ, **ລກ** 24:49. ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ, ພຣະອົງກໍປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ, **ຢຮ** 1:12 (ຄພ 11:30). ເຈົ້າຈະໄດ້ຮັບລິດເດດ, ເມື່ອພຣະວິນຍານບໍລິສຸດຈະສະເດັດມາເຖິງພວກເຈົ້າ, **ກຈກ** 1:8. ບໍ່ມີອຳນາດໃດ ທີ່ບໍ່ໄດ້ມາຈາກພຣະເຈົ້າ, **ຣມ** 13:1. ອຳນາດຂອງພຣະເຈົ້າໄດ້ເຝົ້າຮັກສາໄວ້ດ້ວຍຄວາມເຊື່ອ ຈົນໄດ້ເຖິງຄວາມພົ້ນ, **1 ປຕ** 1:3–5.

ເຮົາເຕັມໄປດ້ວຍອຳນາດຂອງພຣະເຈົ້າ, **1 ນຟ** 17:48. ມັນຖືກສະແດງໃຫ້ປະຈັກແກ່ເຮົາໂດຍອຳນາດຂອງພຣະວິນຍານບໍລິສຸດ, **ຢຄ** 7:12. ມະນຸດອາດມີອຳນາດອັນຍິ່ງໃຫຍ່ທີ່ພຣະເຈົ້າປະທານໃຫ້ເຂົາ, **ມຊຢ** 8:16. ເຂົາເຈົ້າກໍສິດສອນດ້ວຍອຳນາດ ແລະ ສິດອຳນາດຂອງພຣະເຈົ້າ, **ແອວ** 17:2–3. ນີໄຟໄດ້ປະຕິບັດສາດສະໜາກິດດ້ວຍອຳນາດ ແລະ ດ້ວຍສິດ ອຳນາດ ອັນ ຍິ່ງ ໃຫຍ່, **3 ນຟ** 7:15–20 (3 ນຟ 11:19–22).

ເຖິງແມ່ນວ່າມະນຸດອາດມີອຳນາດທີ່ຈະເຮັດວຽກງານອັນຍິ່ງໃຫຍ່, ແຕ່ຖ້າຫາກເຂົາໂອ້ອວດໃນກຳລັງຂອງຕົນເອງ ເຂົາຈະຕົກໄປ, **ຄພ** 3:4. ອຳນາດທີ່ຈະເຮັດຄວາມດີແມ່ນຢູ່ໃນເຮົາແຕ່ລະຄົນ, **ຄພ** 58:27–28. ໃນພິທີການຂອງຖານະປະໂລຫິດແຫ່ງເມນຄີເສເດັກ, ອຳນາດຂອງຄວາມເປັນເໝືອນພຣະເຈົ້າຈະສະແດງໃຫ້ປະຈັກ, **ຄພ** 84:19–22. ສິດຂອງຖານະປະໂລຫິດກ່ຽວຂ້ອງກັບອຳນາດແຫ່ງສະຫວັນຢ່າງແຍກກັນບໍ່ໄດ້, **ຄພ** 121:34–46.

ເຮົາຈະຈູງເຈົ້າໄປດ້ວຍມືຂອງເຮົາ, ແລະ ອຳນາດຂອງເຮົາຈະຢູ່ເໜືອເຈົ້າ, **ອຮຮ** 1:18.

**ອຳເພີໃຈ.** *ເບິ່ງ* ອິດສະລະ, ອິດສະລະພາບ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ *ບຳອິກ*

ຄວາມສາມາດ ແລະ ສິດທິພິເສດທີ່ພຣະເຈົ້າມອບໃຫ້ຜູ້ຄົນທີ່ຈະເລືອກ ແລະ ກະທຳເພື່ອພວກເຂົາເອງ.

ໝາກໄມ້ທຸກກົກໃນສວນນີ້ເຈົ້າກິນໄດ້, **ປຖກ** 2:16. ຈົ່ງຕັດສິນໃຈໃນມື້ນີ້ວ່າ ພວກເຈົ້າຈະບົວລະບັດຮັບໃຊ້ຜູ້ໃດ, **ຢຊ** 24:15 (ແອວ 30:8; ມຊ 6:33).

ມະນຸດກະທຳດ້ວຍຕົວເອງບໍ່ໄດ້ ນອກຈາກຈະເປັນໄປເພາະພວກເຂົາຖືກຊັກຈູງ, **2 ນຟ** 2:15–16. ມະນຸດເປັນອິດສະລະທີ່ຈະເລືອກເສລີພາບ ແລະ ຊີວິດນິລັນດອນ ຫລື ເປັນຊະເລີຍ ແລະ ຄວາມຕາຍ, **2 ນຟ** 2:27. ພວກທ່ານມີອິດສະລະ; ພວກທ່ານໄດ້ຮັບອະນຸຍາດໃຫ້ເຮັດເພື່ອຕົວເອງ, **ຮລມ** 14:30.

ໄພ່ພົນຂອງສະຫວັນໜຶ່ງສ່ວນສາມຫັນໜີຈາກເຮົາບຳອິກ ເພາະອຳເພີໃຈຂອງເຂົາ, **ຄພ** 29:36. ມັນຈຳເປັນວ່າມານຈະຕ້ອງລໍ້ລວງມະນຸດ, ຖ້າບໍ່ດັ່ງນັ້ນພວກເຂົາຈະບໍ່ສາມາດເປັນຕົວແທນ, **ຄພ** 29:39. ໃຫ້ມະນຸດທຸກຄົນເລືອກເພື່ອຕົນເອງ, **ຄພ** 37:4. ມະນຸດທຸກໆຄົນຈະໄດ້ກະທຳຕາມອຳເພີໃຈອັນຊອບທຳຊຶ່ງເຮົາໄດ້ມອບໃຫ້ແກ່ເຂົາ, **ຄພ** 101:78.

ຊາຕານໄດ້ສະແຫວງຫາທີ່ຈະທຳລາຍອຳເພີໃຈຂອງມະນຸດ, **ມຊ** 4:3. ພຣະຜູ້ເປັນເຈົ້າໄດ້ມອບອຳເພີໃຈໃຫ້ມະນຸດ, **ມຊ** 7:32.

**ອຳໂມນ, ຜູ້ເປັນເຊື້ອສາຍຂອງເຊຣາເຮັມລາ.** *ເບິ່ງ* ລິມໄຮ *ບຳອິກ*

ໃນພຣະຄຳພີມໍມອນ, ຊາຍທີ່ເຂັ້ມແຂງ ແລະ ມີອິດທິພົນຄົນໜຶ່ງ ຜູ້ໄດ້ນຳພາຜູ້ຄົນຈຳນວນໜຶ່ງຈາກເຊຣາເຮັມລາໄປສຳຫລວດເບິ່ງແຜ່ນດິນລີໄຮ-ນີໄຟ (ມຊຢ 7:1–16). ລາວໄດ້ເຫັນບັນທຶກບູຮານ, ແລະ ໄດ້ອະທິບາຍຄວາມໝາຍຂອງການເປັນຜູ້ພະຍາກອນ (ມຊຢ 8:5–18). ຕໍ່ມາລາວໄດ້ຊ່ວຍເຫລືອກະສັດລິມໄຮ ແລະ ຜູ້ຄົນຂອງເພິ່ນໃຫ້ເປັນອິດສະລະຈາກ

ຊາວເລມັນ ແລະ ໄດ້ພາເຂົາເຈົ້າກັບຄືນໄປເມືອງເຊຣາເຮັມລາ (ມຊຢ 22).

**ອຳໂມນ, ລູກຊາຍຂອງໂມໄຊຢາ.** *ເບິ່ງ* ໂມໄຊຢາ, ພວກລູກຊາຍຂອງ; ໂມໄຊຢາ, ລູກຊາຍຂອງເບັນຢາມິນ; ອານໄທ-ນີໄຟ-ລີໄຮ *ນຳອີກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນໜຶ່ງຂອງກະສັດໂມໄຊຢາ. ອຳໂມນໄດ້ຮັບໃຊ້ເປັນຜູ້ສອນສາດສະໜາ ຜູ້ຊຶ່ງຄວາມພາກພຽນພະຍາຍາມຂອງລາວໄດ້ຊ່ວຍເຫລືອຜູ້ຄົນຢ່າງຫລວງຫລາຍໃຫ້ປ່ຽນໃຈເຫລື້ອມໃສໃນພຣະຄຣິດ.

ເປັນຜູ້ບໍ່ເຊື່ອຖື ທີ່ສະແຫວງຫາ ທີ່ຈະທຳລາຍສາດສະໜາຈັກ, **ມຊຢ** 27:8–10, 34. ທູດອົງໜຶ່ງໄດ້ມາປະກົດຕໍ່ລາວ ແລະ ໝູ່ເພື່ອນຂອງລາວ, **ມຊຢ** 27:11. ໄດ້ກັບໃຈ ແລະ ເລີ່ມຕົ້ນສັ່ງສອນພຣະຄຳຂອງພຣະເຈົ້າ, **ມຊຢ** 27:32–28:8. ໄດ້ປະຕິເສດບໍ່ຂຶ້ນເປັນກະສັດ ແລະ ໄດ້ໄປຫາແຜ່ນດິນຂອງຊາວເລມັນເພື່ອສັ່ງສອນພຣະຄຳຂອງພຣະເຈົ້າ, **ແອວ** 17:6–9. ໄດ້ຖືສິນອົດເຂົ້າ ແລະ ອະທິຖານເພື່ອຂໍການນຳພາ, **ແອວ** 17:8–11. ໄດ້ຖືກມັດແລ້ວພາໄປຫາກະສັດລາໂມໄນ, **ແອວ** 17:20–21. ໄດ້ຊ່ວຍຮັກສາຝູງສັດລ້ຽງຂອງລາໂມໄນ, **ແອວ** 17:26–39. ໄດ້ສັ່ງສອນລາໂມໄນ, **ແອວ** 18:1–19:13. ໄດ້ຂອບພຣະໄທພຣະເຈົ້າ ແລະ ໄດ້ໝົດກຳລັງໄປດ້ວຍຄວາມສຸກ, **ແອວ** 19:14. ຜູ້ປ່ຽນໃຈເຫລື້ອມໃສຂອງລາວບໍ່ເຄີຍຕົກໄປ, **ແອວ** 23:6. ໄດ້ຊື່ນຊົມໃນການເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າ ໃນການນຳຫລາຍພັນຄົນມາສູ່ຄວາມຈິງ, **ແອວ** 26:1–8 (ແອວ 26). ໄດ້ນຳພາຜູ້ຄົນອານໄທ-ນີໄຟ-ລີໄຮ ໄປຫາບ່ອນປອດໄພ, **ແອວ** 27. ໄດ້ມີຄວາມສຸກຢ່າງລົ້ນເຫລືອເມື່ອໄດ້ພົບກັບອ້າຍນ້ອງຂອງລາວ, **ແອວ** 27:16–18.

**ອວດອ້າງ, ການອວດອ້າງ.** *ເບິ່ງ* ຈອງຫອງ, ຄວາມຈອງຫອງ

**ອວດອົ່ງ, ຄວາມອວດອົ່ງ.** *ເບິ່ງ* ຄວາມເປັນຢູ່ທາງໂລກ; ຈອງຫອງ, ຄວາມຈອງຫອງ *ນຳອີກ*

ຄວາມເທັດ ຫລື ຄວາມຫລອກລວງ; ຄວາມທະນົງຕົວ. ໂອ້ອວດ ແລະ ຄວາມອວດອ້າງຍັງສາມາດໝາຍເຖິງຄວາມເປົ່າປ່ຽວ ຫລື ປາດສະຈາກຄຸນຄ່າ.

ຜູ້ທີ່ມີສະອາດ ແລະ ໃຈບໍລິສຸດ ຈະເຂົ້າໄປໃນພຣະວິຫານທີ່ສັກສິດຂອງພຣະຜູ້ເປັນເຈົ້າໄດ້, **ພສສ** 24:3–4.

ເມື່ອເຈົ້າອະທິຖານ, ຢ່າເວົ້າຊ້ຳຄຳເກົ່າ, **ມທ** 6:7.

ອາຄານຫລັງກວ້າງໃຫຍ່ ຄືຄວາມຄິດຝັນອັນບໍ່ມີປະໂຫຍດ ແລະ ຄວາມທະນົງໃຈ, **1 ນຟ** 12:18. ທ່ານຈະໝົກໝຸ້ນຢູ່ກັບສິ່ງທີ່ບໍ່ມີປະໂຫຍດຂອງໂລກຢູ່ບໍ, **ແອວ** 5:53. ຢ່າຊອກຫາສິ່ງທີ່ບໍ່ມີປະໂຫຍດຂອງໂລກ, ເພາະລູກຈະເອົາມັນໄປກັບລູກບໍ່ໄດ້, **ແອວ** 39:14.

ຄວາມໂອ້ອວດ ແລະ ຄວາມບໍ່ເຊື່ອຖືໄດ້ນຳສາດສະໜາຈັກມາຢູ່ພາຍໃຕ້ການກ່າວໂທດ, **ຄພ** 84:54–55. ເມື່ອພວກເຮົາພະຍາຍາມສະໜອງຄວາມທະເຍີທະຍານອັນໄຮ້ປະໂຫຍດຂອງພວກເຮົາ, ສະຫວັນຈະຖອນຕົວ, **ຄພ** 121:37.

**ຮັກ, ຄວາມຮັກ.** *ເບິ່ງ* ໃຈບຸນ, ຄວາມໃຈບຸນ; ເປັນສັດຕູກັນ, ຄວາມເປັນສັດຕູກັນ; ເມດຕາສົງສານ, ຄວາມເມດຕາສົງສານ *ນຳອີກ*

ການອຸທິດຕົນ ແລະ ຄວາມຮັກທີ່ເລິກຊຶ້ງ. ຄວາມຮັກສຳລັບພຣະເຈົ້າແມ່ນຮ່ວມດ້ວຍການອຸທິດຕົນ, ການບູຊາ, ຄວາມຄາລະວະ, ຄວາມອ່ອນໂຍນ, ຄວາມເມດຕາ, ການໃຫ້ອະໄພ, ຄວາມເມດຕາສົງສານ, ພຣະຄຸນ, ການຮັບໃຊ້, ຄວາມກະຕັນຍູ, ຄວາມກະລຸນາ. ຕົວຢ່າງທີ່ຍິ່ງໃຫຍ່ທີ່ສຸດເຖິງຄວາມຮັກຂອງພຣະເຈົ້າ ສຳລັບລູກໆຂອງພຣະອົງແມ່ນຢູ່ໃນການຊົດໃຊ້ອັນເປັນນິດຂອງພຣະເຢຊູຄຣິດ.

ຈົ່ງຮັກເພື່ອນມະນຸດເໝືອນຮັກຕົນເອງ, **ລລວ** 19:18 (ມທ 5:43–44; 22:37–40; ຣມ 13:9; ຄລຕ 5:14; ຢກບ 2:8; ມຊຢ 23:15; ຄພ 59:6). ຈົ່ງຮັກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າດ້ວຍສຸດໃຈຂອງເຈົ້າ, **ພບຍ** 6:5 (ມຣນ 10:32; ຄພ 59:5). ພຣະຜູ້ເປັນເຈົ້າອົງ

ເປັນພຣະເຈົ້າຂອງພວກເຈົ້າ ພວມໃຊ້ເຂົາມາທົດລອງເບິ່ງພວກເຈົ້າ ເພື່ອຢາກຮູ້ວ່າພວກເຈົ້າຮັກພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າດ້ວຍສຸດໃຈຂອງພວກເຈົ້າຫລືບໍ່, **ພບຍ** 13:3. ພຣະຜູ້ເປັນເຈົ້າດັດແປງກໍ່ສ້າງຜູ້ທີ່ພຣະອົງຮັກ, **ສພສ** 3:12. ໝູ່ເພື່ອນເຫັນໃຈກັນທຸກສະພາບການ, **ສພສ** 17:17.

ພຣະເຈົ້າໄດ້ຮັກໂລກຫລາຍທີ່ສຸດຈົນໄດ້ປະທານພຣະບຸດອົງດຽວທີ່ຖືກຳເນີດຂອງພຣະອົງ, **ຢຮ** 3:16 (ຄພ 138:3). ເຮົາຮັກພວກເຈົ້າສັນໃດ ພວກເຈົ້າກໍຈົ່ງຮັກຊຶ່ງກັນແລະກັນຢ່າງນັ້ນ, **ຢຮ** 13:34 (ຢຮ 15:12, 17; ມຊ 7:33). ຖ້າພວກເຈົ້າຮັກເຮົາ ພວກເຈົ້າກໍຈະເຊື່ອຟັງກົດບັນຍັດຂອງເຮົາ, **ຢຮ** 14:15 (ຄພ 42:29). ບໍ່ມີຜູ້ໃດມີຄວາມຮັກໃຫຍ່ກວ່ານີ້ຄືການທີ່ຜູ້ໜຶ່ງໄດ້ສະລະຊີວິດເພື່ອມິດສະຫາຍຂອງຕົນ, **ຢຮ** 15:13. ເປໂຕ, ເຈົ້າຮັກເຮົາບໍ? ຈົ່ງລ້ຽງຮັກສາແກະຂອງເຮົາເດີ, **ຢຮ** 21:15–17. ບໍ່ມີສິ່ງໃດຈະແຍກພວກເຮົາຈາກຄວາມຮັກຂອງພຣະເຈົ້າໄດ້ ຊຶ່ງມີຢູ່ໃນພຣະຄຣິດ, **ຣມ** 8:35–39. ສິ່ງທີ່ຕາບໍ່ເຫັນ ຫູບໍ່ໄດ້ຍິນ ແລະ ສິ່ງທີ່ມະນຸດຄິດບໍ່ອອກ ແມ່ນສິ່ງນັ້ນທີ່ພຣະເຈົ້າໄດ້ຈັດຕຽມໄວ້ໃຫ້ແກ່ຄົນທັງຫລາຍທີ່ຮັກພຣະອົງ, **1 ກຣທ** 2:9. ຈົ່ງຮັບໃຊ້ຊຶ່ງກັນແລະກັນດ້ວຍຄວາມຮັກເທີ້ນ, **ຄລຕ** 5:13. ຝ່າຍຜົວ, ຈົ່ງຮັກເມຍຂອງຕົນ, **ອຟຊ** 5:25 (ກລຊ 3:19). ຢ່າຮັກໂລກ, **1 ຢຮ** 2:15. ພຣະເຈົ້າເປັນຄວາມຮັກ, **1 ຢຮ** 4:8. ພວກເຮົາຮັກພຣະອົງ, ເພາະພຣະອົງໄດ້ຮັກເຮົາກ່ອນ, **1 ຢຮ** 4:19.

ພຣະຄຣິດໄດ້ອົດທົນ ເພາະຄວາມກະລຸນາຮັກຫອມຂອງພຣະອົງ ແລະ ຄວາມອົດກັ້ນທີ່ພຣະອົງມີຕໍ່ມະນຸດ, **1 ນຟ** 19:9. ຈົ່ງມຸ້ງໜ້າດ້ວຍຄວາມຮັກຂອງພຣະເຈົ້າ ແລະ ຂອງມະນຸດທັງປວງ, **2 ນຟ** 31:20. ພວກທ່ານຈະສອນລູກໆຂອງພວກທ່ານໃຫ້ຮັກກັນ ແລະ ຮັບໃຊ້ຊຶ່ງກັນແລະກັນ, **ມຊຢ** 4:15. ຖ້າຫາກພວກທ່ານຮູ້ສຶກຢາກຮ້ອງເພງສັນລະເສີນຄວາມຮັກທີ່ໄຖ່, ພວກທ່ານຮູ້ສຶກເຊັ່ນນັ້ນບໍ່ໃນຂະນະນີ້, **ແອວ** 5:26. ຖືກພຣະວິນຍານອັນສັກສິດນຳພາໄປ, ເພື່ອກາຍເປັນຄົນອົດທົນ, ເຕັມໄປດ້ວຍຄວາມຮັກ, **ແອວ** 13:28. ຕ້ອງຄວບຄຸມກິເລດຕັນຫາທັງໝົດຂອງລູກ, ເພື່ອລູກຈະເຕັມໄປດ້ວຍຄວາມຮັກ, **ແອວ** 38:12. ບໍ່ມີການຂັດແຍ້ງກັນ ຍ້ອນວ່າຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນໃຈຂອງຜູ້ຄົນ, **4 ນຟ** 1:15. ທຸກສິ່ງທຸກຢ່າງທີ່ເຊື້ອເຊີນໃຫ້ຮັກພຣະເຈົ້າ ແມ່ນມາຈາກການດົນໃຈຈາກພຣະເຈົ້າ, **ມຣນ** 7:13–16. ຄວາມໃຈບຸນຄືຄວາມຮັກອັນບໍລິສຸດຂອງພຣະຄຣິດ, **ມຣນ** 7:47. ຄວາມຮັກທີ່ສົມບູນຍ່ອມຂັບໄລ່ຄວາມຢ້ານກົວທັງໝົດອອກໄປ, **ມຣນ** 8:16 (1 ຢຮ 4:18).

ຄວາມຮັກເຮັດໃຫ້ມະນຸດເໝາະສົມສຳລັບວຽກງານຂອງພຣະເຈົ້າ, **ຄພ** 4:5 (ຄພ 12:8). ການຊຳລະໃຫ້ບໍລິສຸດມາເຖິງທຸກຄົນຜູ້ຮັກ ແລະ ຮັບໃຊ້ພຣະເຈົ້າ, **ຄພ** 20:31. ຖ້າຫາກພວກເຈົ້າຮັກເຮົາ, ພວກເຈົ້າຈະຮັບໃຊ້ເຮົາ ແລະ ຮັກສາພຣະບັນຍັດຂອງເຮົາ, **ຄພ** 42:29 (ຢຮ 14:15). ຈົ່ງສະແດງຄວາມຮັກຫລາຍຂຶ້ນຕໍ່ຄົນທີ່ທ່ານດັດແປງ ຫລື ຕຳນິ, **ຄພ** 121:43.

ມະນຸດຮັກຊາຕານຫລາຍກວ່າພຣະເຈົ້າ, **ມຊ** 5:13, 18, 28.

### ຮັກກາຍ

ສາດສະດາຂອງພຣະຄຳພີເດີມ ຜູ້ໄດ້ທຳນາຍປະມານ 520 ປີ ກ່ອນ ຄ.ສ. ໃນເຢຣູຊາເລັມ, ບໍ່ດົນຫລັງຈາກຊາວຢິວໄດ້ກັບຄືນມາຈາກການເນລະເທດໄປບາບີໂລນ (ອຊຣ 5:1; 6:14). ເພິ່ນໄດ້ກ່າວເຖິງການສ້ອມແປງພຣະວິຫານຂອງພຣະຜູ້ເປັນເຈົ້າຄືນໃໝ່ໃນເຢຣູຊາເລັມ ແລະ ຕຳນິຜູ້ຄົນ ເພາະວ່າມັນຍັງບໍ່ສຳເລັດເທື່ອ. ເພິ່ນຍັງໄດ້ຂຽນເຖິງພຣະວິຫານໃນໄລຍະພັນປີ ແລະ ການປົກຄອງຂອງພຣະຜູ້ຊ່ວຍໃຫ້ລອດ.

*ພຣະທຳຮັກກາຍ:* ໃນບົດທີ 1 ພຣະຜູ້ເປັນເຈົ້າໄດ້ຕິຕຽນຜູ້ຄົນທີ່ອາໄສຢູ່ໃນເຮືອນທີ່ສ້າງສຳເລັດຂອງເຂົາເຈົ້າ ແຕ່ພຣະວິຫານຍັງບໍ່ສຳເລັດເທື່ອ. ບົດທີ 2 ບັນທຶກຄຳທຳນາຍຂອງຮັກກາຍທີ່ພຣະຜູ້ເປັນເຈົ້າຈະປະທານຄວາມສະຫງົບໃນພຣະວິຫານຂອງພຣະອົງ.

**ຮັ່ງມີ, ຄວາມຮັ່ງມີ.** *ເບິ່ງ* ເງິນ; ຈອງຫອງ, ຄວາມຈອງຫອງ *ນຳອີກ*

ຄວາມລ້ຳລວຍ ຫລື ຄວາມອຸດົມສົມບູນ. ພຣະຜູ້ເປັນເຈົ້າແນະນຳໄພ່ພົນຂອງພຣະເຈົ້າ ບໍ່ໃຫ້ສະແຫວງຫາ ຄວາມຮັ່ງມີຂອງໂລກ ຍົກເວັ້ນແຕ່ທີ່ຈະເຮັດຄວາມດີ. ໄພ່ພົນຂອງພຣະເຈົ້າບໍ່ຄວນສະແຫວງຫາຄວາມຮັ່ງມີທາງໂລກ ກ່ອນສະແຫວງຫາອານາຈັກຂອງພຣະເຈົ້າ, ຊຶ່ງມີຄວາມຮັ່ງມີແຫ່ງຊົ່ວນິລັນດອນ (ຢຄ 2:18–19).

ຖ້າພວກເຈົ້າເກີດຮັ່ງຄູນມີ ເປັນດີຂຶ້ນກໍຕາມ ກໍຢ່າເພິ່ງໃນຄວາມຮັ່ງມີນັ້ນ, **ພສສ** 62:10. ຄວາມຮັ່ງມີຈະຊ່ວຍຫຍັງບໍ່ໄດ້ໃນມື້ທີ່ປະເຊີນກັບຄວາມຕາຍ, **ສພສ** 11:4. ຜູ້ທີ່ເພິ່ງໃນຊັບສົມບັດຂອງຕົນນັ້ນ ຈະຖືກທຳລາຍ, **ສພສ** 11:28. ຖ້າຕ້ອງເລືອກເອົາລະຫວ່າງຊື່ສຽງດີກັບຄວາມຮັ່ງມີ ຈົ່ງເລືອກເອົາຊື່ສຽງດີສາເຖີດ, **ສພສ** 22:1.

ທີ່ຄົນຮັ່ງມີຈະເຂົ້າໄປໃນອານາຈັກຂອງພຣະເຈົ້າ ກໍຍາກແທ້ໜໍ, **ມຣກ** 10:23 (ລກ 18:24–25). ການຮັກເງິນຄຳເປັນເຄົ້າມູນຂອງຄວາມຊົ່ວທຸກຢ່າງ, **1 ຕມທ** 6:10.

ວິບັດແກ່ຄົນຮັ່ງມີ ຜູ້ດູຖູກຄົນທຸກຍາກ ແລະຜູ້ຊຶ່ງຊັບສົມບັດຂອງເຂົາຈຶ່ງເປັນພຣະເຈົ້າຂອງເຂົາ, **2 ນຟ** 9:30. ຄົນຊອບທຳບໍ່ໄດ້ໝົກໝຸ້ນຢູ່ກັບຂອງມີຄ່າ ແຕ່ໄດ້ແບ່ງປັນໃຫ້ກັບທຸກຄົນ, **ແອວ** 1:30. ຜູ້ຄົນໄດ້ເລີ່ມຕົ້ນອວດດີເພາະຄວາມຮັ່ງມີ, **ແອວ** 4:6–8. ຜູ້ຄົນເລີ່ມມີການແບ່ງຊັ້ນວັນນະກັນຂຶ້ນ, ຕາມຄວາມຮັ່ງມີຂອງຕົນ, **3 ນຟ** 6:12.

ຢ່າສະແຫວງຫາຄວາມຮັ່ງມີ ແຕ່ຈົ່ງສະແຫວງຫາປັນຍາ, **ຄພ** 6:7 (ແອວ 39:14; ຄພ 11:7). ຄວາມຮັ່ງມີຂອງແຜ່ນດິນໂລກເປັນຂອງພຣະເຈົ້າທີ່ຈະມອບໃຫ້, ແຕ່ຈົ່ງລະວັງຄວາມທະນົງຕົວ, **ຄພ** 38:39.

*ຄວາມຮັ່ງມີແຫ່ງຊົ່ວນິລັນດອນ:* ຈົ່ງທ້ອນໂຮມຊັບສົມບັດໄວ້ໃນສະຫວັນ, **ມທ** 6:19–21. ຈັກເທື່ອແລ້ວ ທີ່ເຮົາໄດ້ເອີ້ນພວກເຈົ້າໂດຍຄວາມຮັ່ງມີແຫ່ງຊີວິດນິລັນດອນ, **ຄພ** 43:25. ຄວາມຮັ່ງມີແຫ່ງຊົ່ວນິລັນດອນເປັນຂອງເຮົາທີ່ຈະມອບໃຫ້, **ຄພ** 67:2 (ຄພ 78:18).

**ຮັນນາ.** *ເບິ່ງ* ຊາມູເອນ, ສາດສະດາໃນພຣະຄຳພີເດີມ *ນຳອີກ*

ແມ່ຂອງຊາມູເອນ, ສາດສະດາໃນພຣະຄຳພີເດີມ. ພຣະຜູ້ເປັນເຈົ້າໄດ້ປະທານຊາມູເອນໃຫ້ແກ່ນາງຮັນນາເພື່ອເປັນຄຳຕອບຕໍ່ຄຳອະທິຖານຂອງນາງ (1 ຊມອ 1:11, 20–28). ນາງຮັນນາໄດ້ອຸທິດຊາມູເອນໃຫ້ແກ່ພຣະຜູ້ເປັນເຈົ້າ. ເພງແຫ່ງຄວາມຂອບພຣະໄທຂອງນາງ ສາມາດປຽບທຽບໃສ່ກັບຂອງນາງມາຣີ, ມານດາຂອງພຣະເຢຊູ (1 ຊມອ 2:1–10; ລກ 1:46–55).

**ຮັບໃຊ້, ການຮັບໃຊ້.** *ເບິ່ງ* ຄວາມຜາສຸກ; ຮັກ, ຄວາມຮັກ *ນຳອີກ*

ການດູແລທີ່ໄດ້ມອບໃຫ້ ຫລື ວຽກງານທີ່ໄດ້ເຮັດໄປເພື່ອຜົນປະໂຫຍດຂອງພຣະເຈົ້າ ແລະຂອງຄົນອື່ນ. ເມື່ອເຮົາຮັບໃຊ້ຄົນອື່ນ, ເຮົາກໍຮັບໃຊ້ພຣະເຈົ້າຄືກັນ.

ຈົ່ງຕັດສິນໃຈໃນມື້ນີ້ວ່າ ພວກເຈົ້າຈະບົວລະບັດຮັບໃຊ້ຜູ້ໃດ, **ຢຊ** 24:15.

ເພາະຕາບໃດທີ່ພວກເຈົ້າໄດ້ເຮັດສິ່ງເຫລົ່ານີ້ແກ່ຄົນທີ່ຕ່ຳຕ້ອຍທີ່ສຸດ, ພວກເຈົ້າກໍໄດ້ເຮັດແກ່ເຮົາເໝືອນກັນ, **ມທ** 25:35–45. ໃຫ້ຖວາຍຕົວເປັນເຄື່ອງບູຊາອັນມີຊີວິດ, ຊຶ່ງເປັນການນະມັດສະການທີ່ເໝາະສົມ, **ຣມ** 12:1. ຈົ່ງຮັບໃຊ້ຊຶ່ງກັນແລະກັນ ດ້ວຍຄວາມຮັກ, **ຄລຕ** 5:13.

ວັນເວລາຂອງລູກ ຈະຖືກໃຊ້ໄປໃນການຮັບໃຊ້ພຣະເຈົ້າຂອງລູກ, **2 ນຟ** 2:3. ເມື່ອພວກທ່ານຮັບໃຊ້ເພື່ອນມະນຸດດ້ວຍກັນ ພວກທ່ານກໍຮັບໃຊ້ພຣະເຈົ້າຂອງພວກທ່ານນັ້ນເອງ, **ມຊຍ** 2:17. ຜູ້ໃດກໍຕາມທີ່ຈະເປັນເຈົ້າຂອງແຜ່ນດິນແຫ່ງຄຳສັນຍານີ້ ຄວນຮັບໃຊ້ພຣະເຈົ້າ, ຖ້າບໍ່ດັ່ງນັ້ນ ເຂົາຈະຖືກກວາດອອກໄປ, **ອທ** 2:8–12.

ຜູ້ເລີ່ມຕົ້ນໃນການຮັບໃຊ້ພຣະເຈົ້າ ຈົ່ງເບິ່ງວ່າເຈົ້າຮັບໃຊ້ພຣະອົງດ້ວຍສຸດໃຈ, **ຄພ** 4:2. ພຣະຜູ້ເປັນເຈົ້າໄດ້ປະທານພຣະບັນຍັດໃຫ້

ເພື່ອວ່າມະນຸດຈະຮັກ ແລະ ຮັບໃຊ້ພຣະອົງ, **ຄພ** 20:18–19. ໃນພຣະນາມຂອງພຣະເຢຊູຄຣິດ ໃຫ້ເຈົ້າຮັບໃຊ້ພຣະເຈົ້າ, **ຄພ** 59:5. ເຮົາ, ພຣະຜູ້ເປັນເຈົ້າ, ເບີກບານທີ່ຈະໃຫ້ກຽດຄົນເຫລົ່ານັ້ນທີ່ຈະຮັບໃຊ້ເຮົາ, **ຄພ** 76:5.

ຈົ່ງນະມັດສະການພຣະເຈົ້າ, ເພາະວ່າພຣະອົງເທົ່ານັ້ນທີ່ເຈົ້າຈະຮັບໃຊ້, **ມຊ** 1:15.

**ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ.** *ເບິ່ງ* ອຳເພີໃຈ *ນຳອີກ*

ພຣະຜູ້ເປັນເຈົ້າໄດ້ກ່າວວ່າ ຜູ້ຄົນທັງປວງຕ້ອງຮັບຜິດຊອບຕໍ່ເຈດຕະນາ, ທັດສະນະ, ຄວາມປາດຖະໜາ, ແລະ ການກະທຳຂອງຕົນເອງ.

ອາຍຸທີ່ຮູ້ຈັກຮັບຜິດຊອບ ແມ່ນອາຍຸຕອນທີ່ເດັກນ້ອຍໃຫຍ່ພຽງພໍທີ່ຈະຮັບຜິດຊອບສຳລັບການກະທຳຂອງເຂົາເອງ ແລະ ສາມາດເຮັດບາບ ແລະ ກັບໃຈໄດ້.

ເຮົາຈະຕັດສິນທຸກຄົນຕາມການກະທຳຂອງເຂົາ, **ອຊກ** 18:30.

ເຂົາຈະໃຫ້ຖ້ອຍຄຳເປົ່າໆທຸກຄຳ, **ມທ** 12:36. ຈົ່ງລາຍງານກ່ຽວກັບໜ້າທີ່ຂອງເຈົ້າສາ, **ລກ** 16:2. ພວກເຮົາແຕ່ລະຄົນ ຈະຕ້ອງລາຍງານເລື່ອງລາວຂອງຕົນເອງຕໍ່ພຣະເຈົ້າ, **ຣມ** 14:12. ຄົນທີ່ຕາຍແລ້ວຈະຖືກພິພາກສາຕາມວຽກງານຂອງພວກເຂົາ, **ພນມ** 20:12.

ຄຳເວົ້າ, ການກະທຳ, ແລະ ຄວາມນຶກຄິດທັງໝົດຂອງພວກເຮົາ ຈະກ່າວໂທດພວກເຮົາ, **ແອວ** 12:14. ພວກເຮົາເປັນຜູ້ພິພາກສາຂອງຕົນເອງ, ບໍ່ວ່າຈະກະທຳຄວາມດີ ຫລື ຄວາມຊົ່ວ, **ແອວ** 41:7. ພວກທ່ານໄດ້ຮັບອະນຸຍາດໃຫ້ເຮັດເພື່ອຕົວເອງ, **ຮລມ** 14:29–31. ລູກຈົ່ງສອນເລື່ອງຕໍ່ໄປນີ້—ເຊັ່ນ ການກັບໃຈ ແລະ ການບັບຕິສະມາໃຫ້ຄົນທີ່ຮູ້ຈັກຮັບຜິດຊອບ, **ມຣນ** 8:10.

ທຸກຄົນຈະຕ້ອງກັບໃຈ ແລະ ຮັບບັບຕິສະມາ, ຜູ້ຈະເຖິງອາຍຸທີ່ຮູ້ຈັກຮັບຜິດຊອບໄດ້, **ຄພ** 18:42. ຊາຕານບໍ່ສາມາດລໍ້ລວງເດັກນ້ອຍໆ, ຈົນກວ່າພວກເຂົາເລີ່ມຮູ້ຈັກຮັບຜິດຊອບຢູ່ຕໍ່ໜ້າເຮົາ, **ຄພ** 29:46–47. ເດັກນ້ອຍຈະຕ້ອງຮັບບັບຕິສະມາເມື່ອມີອາຍຸໄດ້ແປດປີ, **ຄພ** 68:27. ມະນຸດທຸກຄົນຈະຮັບຜິດຊອບຕໍ່ບາບຂອງຕົນເອງໃນວັນແຫ່ງການພິພາກສາ, **ຄພ** 101:78.

ມັນໄດ້ຖືກມອບໃຫ້ແກ່ມະນຸດເພື່ອຈະໄດ້ຮູ້ຄວາມດີຈາກຄວາມຊົ່ວ; ດັ່ງນັ້ນ ພວກເຂົາຈຶ່ງເປັນຕົວແທນອິດສະລະພາບຂອງຕົນເອງ, **ມຊ** 6:56. ມະນຸດຈະໄດ້ຮັບໂທດເພາະບາບຂອງຕົນ, **ຫຼຊ** 1:2.

**ຮັບເອົາ, ການຮັບເອົາ.** *ເບິ່ງ* ບຸດ ແລະ ທິດາຂອງພຣະເຈົ້າ; ລູກໆຂອງພຣະຄຣິດ; ອັບຣາຮາມ—ເຊື້ອສາຍຂອງອັບຣາຮາມ; ອິດສະຣາເອນ *ນຳອີກ*

ພຣະຄຳພີກ່າວເຖິງການຮັບເອົາໃນສອງຮູບແບບ.

(1) ຜູ້ບໍ່ແມ່ນທາຍາດຂອງຊາວອິດສະຣາເອນຈະກາຍເປັນຄົນໃນຄອບຄົວຂອງອັບຣາຮາມ ແລະ ເຊື້ອສາຍອິດສະຣາເອນໄດ້ໂດຍການມີສັດທາໃນພຣະເຢຊູຄຣິດ, ກັບໃຈ, ຮັບບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວ, ແລະ ຮັບເອົາພຣະວິນຍານບໍລິສຸດ (2 ນຟ 31:17–18; ຄພ 84:73–74; ອຣຮ 2:6, 10–11).

(2) ທຸກຄົນທີ່ໄດ້ຮັບພິທີການແຫ່ງຄວາມລອດຂອງພຣະກິດຕິຄຸນຈະກາຍເປັນບຸດ ແລະ ທິດາຂອງພຣະເຢຊູຄຣິດ ໂດຍການເຊື່ອຟັງຕໍ່ພຣະບັນຍັດຂອງພຣະອົງສະເໝີໄປ (ໂຣມ 8:15–17; ຄລຕ 3:24–29; 4:5–7; ມຊຢ 5:7–8).

**ຮັບຮອງ, ການຮັບຮອງ.** *ເບິ່ງ* ຊົດໃຊ້, ການຊົດໃຊ້; ຊຳລະໃຫ້ບໍລິສຸດ, ການຊຳລະໃຫ້ບໍລິສຸດ *ນຳອີກ*

ທີ່ຈະຖືກອະໄພຈາກການລົງໂທດສຳລັບບາບ ແລະ ປະກາດການບໍ່ມີຄວາມຜິດ. ບຸກຄົນຖືກຮັບຮອງໂດຍພຣະຄຸນຂອງພຣະຜູ້ຊ່ວຍໃຫ້ລອດ ຜ່ານການມີສັດທາໃນພຣະອົງ. ສັດທານີ້ສະແດງອອກໂດຍການກັບໃຈ ແລະ ການເຊື່ອຟັງຕໍ່ກົດ ແລະ ພິທີການຂອງພຣະກິດຕິຄຸນ. ການຊົດໃຊ້ຂອງພຣະເຢຊູຄຣິດອະ

ນຸຍາດໃຫ້ມະນຸດຊາດສາມາດກັບໃຈ ແລະ ຖືກຮັບຮອງ ຫລື ຖືກອະໄພຈາກການລົງໂທດທີ່ເຂົາຈະໄດ້ຮັບ.

ໃນພຣະຜູ້ເປັນເຈົ້າ ຊາວອິດສະຣາເອນທຸກຄົນຈະຖືກຮັບຮອງ, **ອຊຢ** 45:25.

ບໍ່ແມ່ນຄົນທີ່ຟັງ ແຕ່ແມ່ນຜູ້ທີ່ໄດ້ເຮັດຕາມກົດທີ່ຖືວ່າເປັນຄົນຊອບທຳ, **ຣມ** 2:13. ມະນຸດເປັນຄົນຊອບທຳຜ່ານໂລຫິດຂອງພຣະຄຣິດ, **ຣມ** 5:1–2, 9. ພວກເຈົ້າເປັນຄົນຊອບທຳໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າ, **1 ກຣທ** 6:11. ການເປັນຄົນຊອບທຳດ້ວຍພຣະຄຸນຂອງພຣະອົງ, ເຮົາຈະໄດ້ຮັບມໍລະດົກ, **ຕຕ** 3:7. ອັບຣາຮາມບັນພະບຸລຸດຂອງພວກເຮົາຖືກຮັບວ່າເປັນຄົນຊອບທຳໂດຍການປະຕິບັດຂອງເພິ່ນ, **ຢກບ** 2:21. ຈະຖືວ່າຊາຍຄົນໜຶ່ງເປັນຄົນຊອບທຳໂດຍການປະຕິບັດ, ແລະ ບໍ່ແມ່ນໂດຍການມີສັດທາເທົ່ານັ້ນ, **ຢກບ** 2:14–26.

ໂດຍທາງກົດບໍ່ມີເນື້ອໜັງອັນໃດທີ່ຖືກຕ້ອງ, **2 ນຟ** 2:5. ຜູ້ຮັບໃຊ້ທີ່ຊອບທຳຂອງເຮົາຈະຮັບຮອງຄົນຢ່າງຫລວງຫລາຍ, ເພາະເພິ່ນຈະແບກຄວາມຊົ່ວຮ້າຍຂອງຄົນເຫລົ່ານັ້ນ, **ມຊຢ** 14:11 (ອຊຢ 53:11). ພວກທ່ານຈະກ່າວໄດ້ບໍວ່າ ອາພອນຂອງພວກທ່ານນັ້ນສະອາດ ດ້ວຍໂລຫິດຂອງພຣະຄຣິດ, **ແອວ** 5:27.

ການຮັບຮອງຜ່ານພຣະຄຸນຂອງພຣະເຢຊູຄຣິດແມ່ນຈິງ, **ຄພ** 20:30–31 (ຄພ 88:39).

ໂດຍພຣະວິນຍານພວກເຈົ້າຈະຖືກຮັບຮອງ, **ມຊ** 6:60.

**ຮາກາ.** *ເບິ່ງ* ອັບຣາຮາມ; ອິດຊະມາເອນ, ລູກຊາຍຂອງອັບຣາຮາມ *ບຳອິກ*

ໃນພຣະຄຳພີເດີມ, ສາວໃຊ້ຄົນເອຢິບຂອງນາງຊາຣາ. ນາງໄດ້ກາຍເປັນເມຍຂອງອັບຣາຮາມ ແລະ ເປັນແມ່ຂອງອິດຊະມາເອນ (ປຖກ 16; 25:12; ຄພ 132:34, 65). ພຣະຜູ້ເປັນເຈົ້າໄດ້ສັນຍາກັບນາງຮາກາວ່າ ເຊື້ອສາຍທີ່ຍິ່ງໃຫຍ່ຈະເກີດຈາກລູກຊາຍຂອງນາງ (ປຖກ 21:9–21).

**ຮ່າງກາຍ.** *ເບິ່ງ* ການຟື້ນຄືນພຣະຊົນ, ການຟື້ນຄືນຊີວິດ; ຄວາມຕາຍທາງຮ່າງກາຍ; ຈິດວິນຍານ; ມະຕະ, ຄວາມເປັນມະຕະ *ບຳອິກ*

ໂຄງຮ່າງທາງຮ່າງກາຍທີ່ເປັນມະຕະຂອງເນື້ອໜັງ ແລະ ກະດູກ ໄດ້ຖືກສ້າງຂຶ້ນຕາມຮູບຮ່າງລັກສະນະຂອງ ພຣະເຈົ້າ ທີ່ຮ່ວມດ້ວຍວິນຍານ ເພື່ອປະກອບເປັນຄົນທີ່ມີຊີວິດ. ຮ່າງກາຍທີ່ເປັນເນື້ອໜັງຂອງມະນຸດຊາຍ ແລະ ຍິງທຸກຄົນຈະເຂົ້າຄືນຫາວິນຍານຂອງເຂົາເຈົ້າຢ່າງເປັນນິລັນດອນ ໃນການຟື້ນຄືນຊີວິດ. ບາງເທື່ອພຣະຄຳພີກ່າວເຖິງຮ່າງກາຍ ແລະ ວິນຍານທີ່ຮວມເຂົ້າກັນວ່າເປັນ ຈິດວິນຍານ (ປຖກ 2:7; ຄພ 88:15; ມຊ 3:7, 9, 19; ອຣຮ 5:7).

ອົງພຣະຜູ້ເປັນເຈົ້າໄດ້ເອົາຂີ້ດິນແຕ່ພື້ນດິນມາປັ້ນເປັນຊາຍ, **ປຖກ** 2:7 (ມຊ 3:7).

ຈົ່ງຄຳ ເບິ່ງຕົວເຮົາ ແລະ ພວກເຈົ້າກໍຈະຮູ້, ເພາະວ່າຜີບໍ່ມີເນື້ອໜັງ ແລະ ກະດູກ, **ລກ** 24:39. ເຮົາທຸບຕີຮ່າງກາຍຂອງເຮົາໃຫ້ມັນແຂງຢູ່ຄາມື, **1 ກຣທ** 9:27. ມີຮ່າງກາຍທຳມະດາ, ແລະ ມີຮ່າງກາຍຝ່າຍວິນຍານ, **1 ກຣທ** 15:44. ຮ່າງກາຍທີ່ບໍ່ມີຈິດວິນຍານກໍຕາຍແລ້ວ, **ຢກບ** 2:26.

ຮ່າງກາຍທີ່ເປັນມະຕະຈະຖືກຍົກຂຶ້ນເປັນຮ່າງກາຍອະມະຕະ, **ແອວ** 11:43–45. ທຸກສ່ວນຂອງຮ່າງກາຍຈະຖືກນຳກັບຄືນຫາຕົວ, **ແອວ** 41:2. ພຣະເຢຊູໄດ້ສະແດງພຣະກາຍທີ່ຟື້ນຄືນພຣະຊົນຂອງພຣະອົງຕໍ່ຊາວນີໄຟ, **3 ນຟ** 10:18–19; 11:13–15.

ພຣະບິດາມີພຣະກາຍທີ່ເປັນເນື້ອໜັງ ແລະ ກະດູກ ທີ່ສຳພັດໄດ້ດັ່ງຂອງມະນຸດ; ພຣະບຸດກໍເໝືອນກັນ, **ຄພ** 130:22.

ພຣະເຈົ້າໄດ້ສ້າງຊາຍ ແລະ ຍິງ ໃນຮູບຮ່າງລັກສະນະທີ່ເໝືອນຮູບຮ່າງຂອງພຣະອົງເອງ, **ມຊ** 6:9 (ປຖກ 9:6).

**ຣາຍດ໌, ອໍສັນ**

ສະມາຊິກໃນກຸ່ມອັກຄະສາວົກສິບສອງກຸ່ມທຳອິດທີ່ຖືກເອີ້ນໃນຍຸກສະໄໝນີ້ (ຄພ 68:1–3; 75:13; 102:3; 124:128–129). ເພິ່ນໄດ້ປະຕິບັດໜ້າທີ່ມອບໝາຍຫລາຍເທື່ອໃຫ້ສາດສະ

ໜາຈັກ, ລວມທັງການອຸທິດແຜ່ນດິນສັກສິດໃນປີ 1841 ສຳລັບການກັບມາຂອງຊາວຢິວ.

**ຮາບາກຸກ**

ສາດສະດາຂອງພຣະຄຳພີເດີມໃນຢູດາ ຜູ້ໄດ້ກ່າວເຖິງຄວາມຊົ່ວຮ້າຍຂອງຜູ້ຄົນ ທີ່ອາດເປັນໃນລະຫວ່າງການປົກຄອງຂອງເຢໂຮຍອາກິມ (ປະມານ 600 ປີ ກ່ອນ ຄ.ສ.).

*ພຣະທຳຮາບາກຸກ:* ບົດທີ 1 ແມ່ນການສົນທະນາລະຫວ່າງພຣະຜູ້ເປັນເຈົ້າ ແລະ ສາດສະດາຂອງພຣະອົງ, ຄ້າຍຄືກັບເລື່ອງລາວໃນ ເຢເຣມີຢາ 12 ແລະ ຄພ 121. ຮາບາກຸກບໍ່ສະບາຍໃຈທີ່ເບິ່ງຄືວ່າ ຄົນຊົ່ວຈະເລີນຮຸ່ງເຮືອງ. ໃນບົດທີ 2 ພຣະຜູ້ເປັນເຈົ້າໄດ້ແນະນຳຮາບາກຸກໃຫ້ມີຄວາມອົດທົນ—ຄົນທ່ຽງທຳຕ້ອງຮຽນທີ່ຈະດຳລົງຊີວິດໂດຍສັດທາ. ບົດທີ 3 ບັນທຶກຄຳອະທິຖານຂອງຮາບາກຸກ ຊຶ່ງໃນນັ້ນເພິ່ນໄດ້ຮັບຮູ້ຄວາມຍຸດຕິທຳຂອງພຣະເຈົ້າ.

**ຮາມ.** *ເບິ່ງ* ໂນອາ, ບິຕຸໃນພຣະຄຣິສຕະທຳຄຳພີ *ບຳອິກ*

ໃນພຣະຄຳພີເດີມ, ລູກຊາຍຄົນທີສາມຂອງໂນອາ (ປຖກ 5:32; 6:10; ມຊ 8:12, 27).

ໂນອາ, ພວກລູກຊາຍຂອງເພິ່ນ, ແລະຄອບຄົວຂອງເຂົາເຈົ້າໄດ້ເຂົ້າໄປໃນເຮືອ, **ປຖກ** 7:13. ການາອານ, ລູກຊາຍຂອງຮາມ, ໄດ້ຖືກສາບແຊ່ງ, **ປຖກ** 9:18–25.

ການປົກຄອງຂອງຮາມເປັນແບບປິຕຸ ແລະໄດ້ຮັບພອນໃນສິ່ງທີ່ເປັນຂອງໂລກ ແລະດ້ວຍພອນແຫ່ງປັນຍາ ແຕ່ບໍ່ແມ່ນຖານະປະໂລຫິດ, **ອຣຮ** 1:21–27. ພັນລະຍາຂອງຮາມ, ເອຢິບໂຕ, ເປັນຜູ້ສືບຕະກຸນຂອງກາອິນ; ພວກລູກຊາຍຂອງນາງເອຢິບໂຕ ໄດ້ຕັ້ງຖິ່ນຖານຢູ່ປະເທດເອຢິບ, **ອຣຮ** 1:23, 25 (ພສສ 105:23; 106:21–22).

**ຮິມໄນ.** *ເບິ່ງ* ໂມໄຊຢາ, ພວກລູກຊາຍຂອງ; ໂມໄຊຢາ, ລູກຊາຍຂອງເບັນຢາມິນ *ບຳອິກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນໜຶ່ງຂອງກະສັດໂມໄຊຢາ. ຮິມໄນໄດ້ໄປສັ່ງສອນຊາວເລມັນກັບພວກອ້າຍນ້ອງຂອງລາວ (ມຊຢ 27:8–11, 34–37; 28:1–9).

**ຮີລາມັນ, ພວກລູກຊາຍຂອງ.** *ເບິ່ງ* ອານໄທ-ນີໄຟ-ລີໄຮ; ຮີລາມັນ, ລູກຊາຍຂອງແອວມາ *ບຳອິກ*

ໃນພຣະຄຳພີມໍມອນ, ພວກລູກຊາຍຂອງຊາວເລມັນທີ່ປ່ຽນໃຈເຫລື້ອມໃສ ຊຶ່ງຮູ້ຈັກກັນວ່າຊາວອຳໂມນ ຜູ້ໄດ້ກາຍເປັນນັກຮົບຂອງຮລາມັນ (ແອວ 53:16–22).

ຮີລາມັນນັບຖືພວກເຂົາວ່າມີຄ່າຄວນທີ່ຈະຖືກເອີ້ນວ່າລູກຊາຍຂອງເພິ່ນ, **ແອວ** 56:10. ແມ່ຂອງພວກເຂົາໄດ້ສິດສອນພວກເຂົາບໍ່ໃຫ້ສົງໃສຄວາມສາມາດຂອງພຣະຜູ້ເປັນເຈົ້າທີ່ຈະປົດປ່ອຍພວກເຂົາ, **ແອວ** 56:47. ພວກເຂົາໄດ້ເອົາຊະນະຊາວເລມັນ ແລະ ໄດ້ຖືກຮັກສາໄວ້ໂດຍສັດທາຂອງພວກເຂົາ ຈົນບໍ່ມີຄົນໃດຖືກຂ້າຕາຍ, **ແອວ** 56:52–54, 56; 57:26.

**ຮີລາມັນ, ລູກຊາຍຂອງກະສັດເບັນຢາມິນ.** *ເບິ່ງ* ເບັນຢາມິນ, ບິດາຂອງໂມໄຊຢາ *ບຳອິກ*

ໃນພຣະຄຳພີມໍມອນ, ລູກຊາຍຄົນໜຶ່ງຂອງກະສັດເບັນຢາມິນ (ມຊຢ 1:2–8).

**ຮີລາມັນ, ລູກຊາຍຂອງແອວມາ.** *ເບິ່ງ* ອານໄທ-ນີໄຟ-ລີໄຮ; ແອວມາ, ລູກຊາຍຂອງແອວມາ; ຮີລາມັນ, ພວກລູກຊາຍຂອງ *ບຳອິກ*

ໃນພຣະຄຳພີມໍມອນ, ລູກຊາຍກົກຂອງແອວມາ, ຜູ້ຊຶ່ງເປັນລູກຊາຍຂອງແອວມາ (ແອວ 31:7). ຮີລາມັນເປັນສາດສະດາ ແລະເປັນຜູ້ນຳກອງທັບທະຫານ.

ແອວມາໄດ້ມອບບັນທຶກກ່ຽວກັບຜູ້ຄົນຂອງເພິ່ນ ແລະ ບັນທຶກຂອງຊາວຢາເຣດໃຫ້ຮີລາມັນລູກຊາຍຂອງເພິ່ນ, **ແອວ** 37:1–2, 21. ແອວມາໄດ້ສັ່ງໃຫ້ຮີລາມັນຂຽນປະຫວັດສາດຂອງຜູ້ຄົນຂອງເພິ່ນຕໍ່ໄປ, **ແອວ** 45–62. ຮີລາມັນໄດ້ສະຖາປະນາສາດສະໜາຈັກຄືນໃໝ່, **ແອວ** 45:22–23. ຊາຍໜຸ່ມນັກຮົບຊາວອຳໂມນສອງພັນຄົນປາດຖະໜາໃຫ້ຮີລາມັນ

ເປັນຜູ້ນຳຂອງພວກເຂົາ, **ແອວ** 53:19, 22. ຮີລາມັນ ແລະ ນັກຮົບໜຸ່ມຊາວອຳໂມນຂອງເພິ່ນໄດ້ສູ້ຮົບກັບຊາວເລມັນ ແລະ ໄດ້ຖືກຮັກສາໄວ້ໂດຍສັດທາ, **ແອວ** 57:19–27.

**ຮີລາມັນ, ລູກຊາຍຂອງຮີລາມັນ**

ສາດສະດາ ແລະ ຜູ້ຮັກສາບັນທຶກໃນພຣະຄຳພີມໍມອນ ຜູ້ໄດ້ສິດສອນຊາວນີໄຟ. ເພິ່ນເປັນຫລານຊາຍຂອງແອວມາຜູ້ເປັນລູກ ແລະ ເປັນພໍ່ຂອງນີໄຟຜູ້ໄດ້ຮັບອຳນາດໃນທຸກເລື່ອງ. ພ້ອມດ້ວຍນີໄຟລູກຊາຍຂອງເພິ່ນ, ຮີລາມັນໄດ້ຂຽນໜັງສືຮີລາມັນ.

*ໜັງສືຮີລາມັນ:* ບົດທີ 1–2 ບັນຍາຍກ່ຽວກັບເວລາທີ່ມີບັນຫາເລື່ອງທາງການເມືອງ. ບົດທີ 3–4 ບັນທຶກວ່າຮີລາມັນ ແລະ ໂມໂຣໄນຮາ, ຫົວໜ້ານາຍທະຫານຂອງກອງທັບຊາວນີໄຟ, ໃນທີ່ສຸດໄດ້ຮັບຄວາມສະຫງົບໃນຊົ່ວໄລຍະໜຶ່ງ. ເຖິງຢ່າງໃດກໍຕາມ, ເຖິງແມ່ນມີຜູ້ນຳທີ່ດີເຫລົ່ານັ້ນ, ແຕ່ຜູ້ຄົນກໍຍັງນັບມື້ນັບຊົ່ວຮ້າຍຫລາຍຂຶ້ນ. ໃນ ຮີລາມັນ 5:1–6:14 ນີໄຟໄດ້ສະລະບັນລັງພິພາກສາ, ດັ່ງທີ່ແອວມາຜູ້ເປັນພໍ່ຕູ້ໄດ້ເຮັດ, ເພື່ອສິດສອນຜູ້ຄົນ. ຜູ້ຄົນໄດ້ກັບໃຈຊົ່ວໄລຍະໜຶ່ງ. ເຖິງຢ່າງໃດກໍຕາມ ໃນ ຮີລາມັນ 6:15–12:26, ປະຊາຊາດຊາວນີໄຟໄດ້ກາຍເປັນຄົນຊົ່ວ. ບົດສຸດທ້າຍ, 13–16, ບັນຈຸເລື່ອງລາວທີ່ໜ້າອັດສະຈັນໃຈຂອງສາດສະດາຄົນໜຶ່ງຊື່ ຊາມູເອນຄົນເລມັນ ຜູ້ໄດ້ບອກລ່ວງໜ້າເຖິງການກຳເນີດ ແລະ ການຕາຍຂອງພຣະຜູ້ຊ່ວຍໃຫ້ລອດ ແລະ ເຖິງເຄື່ອງໝາຍທີ່ຈະເກີດຂຶ້ນໃນເຫດການເຫລົ່ານັ້ນ.

**ຮຸ້ງກິນນ້ຳ.** *ເບິ່ງ* ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ; ນ້ຳຖ້ວມໃນວັນເວລາຂອງໂນອາ; ເຮືອໃຫຍ່ *ນຳອີກ*

ເຄື່ອງໝາຍ ຫລື ສັນຍາລັກແຫ່ງພັນທະສັນຍາທີ່ພຣະເຈົ້າໄດ້ເຮັດໄວ້ນຳໂນອາ (ປຖກ 9:13–17). ປຈສ, ປະຖົມມະການ 9:21–25 (ພາກທ້ອຍທ້າຍ) ອະທິບາຍວ່າ ພັນທະສັນຍານັ້ນແມ່ນລວມທັງຄຳສັນຍາ ທີ່ວ່າແຜ່ນດິນໂລກຈະບໍ່ຖືກນ້ຳປົກຄຸມທັງໝົດອີກຕໍ່ໄປ, ວ່າເມືອງຊີໂອນຂອງເອນົກຈະກັບຄືນມາ, ແລະ ວ່າພຣະຜູ້ເປັນເຈົ້າຈະສະເດັດຄືນມາອີກ ເພື່ອອາໄສຢູ່ເທິງແຜ່ນດິນໂລກ.

**ຮູ້ຈັກຮັບຜິດຊອບ, ອາຍຸທີ່.** *ເບິ່ງ* ການບັບຕິສະມາຂອງເດັກແດງທາລົກ; ເດັກ, ເດັກນ້ອຍ; ບັບຕິສະມາ, ໃຫ້ບັບຕິສະມາ—ການບັບຕິສະມາບໍ່ແມ່ນສຳລັບເດັກແດງທາລົກ; ຮັບຜິດຊອບ, ຮູ້ຈັກຮັບຜິດຊອບ, ຄວາມຮັບຜິດຊອບ

**ຮູ້ແຈ້ງ, ຄວາມຮູ້ແຈ້ງ, ຜູ້ຄົນທີ່ມີຄວາມຮູ້ແຈ້ງ.** *ເບິ່ງ* ຄວາມສະຫວ່າງ, ຄວາມສະຫວ່າງຂອງພຣະຄຣິດ; ຈິງ, ຄວາມຈິງ; ວິນຍານ *ນຳອີກ*

ຄວາມຮູ້ແຈ້ງມີຄວາມໝາຍຫລາຍຢ່າງ, ສາມຢ່າງຄື: (1) ມັນເປັນຄວາມສະຫວ່າງຂອງຄວາມຈິງທີ່ໃຫ້ຊີວິດ ແລະ ຄວາມສະຫວ່າງໃນຈັກກະວານ. ມັນເປັນມາຕະຫລອດ. (2) ຄຳວ່າ ຄວາມຮູ້ແຈ້ງຕ່າງໆ ອາດໝາຍເຖິງວິນຍານຂອງລູກໆຂອງພຣະເຈົ້າຄືກັນ. (3) ພຣະຄຳພີອາດກ່າວເຖິງຄວາມຮູ້ແຈ້ງອີກ ວ່າເປັນທາດທາງວິນຍານ ກ່ອນເຮົາໄດ້ຖືກກຳເນີດເປັນລູກທາງວິນຍານ.

ຄວາມຮູ້ແຈ້ງຈະແນບສະໜິດຢູ່ກັບຄວາມຮູ້ແຈ້ງ, **ຄພ** 88:40. ຄວາມຮູ້ແຈ້ງບໍ່ໄດ້ຖືກສ້າງຂຶ້ນ ຫລື ເຮັດຂຶ້ນ, **ຄພ** 93:29. ຄວາມຮູ້ແຈ້ງເປັນອິດສະລະຢູ່ໃນຂອບເຂດທີ່ພຣະເຈົ້າໄດ້ວາງມັນໄວ້, **ຄພ** 93:30. ລັດສະໝີພາບຂອງພຣະເຈົ້າເປັນຄວາມຮູ້ແຈ້ງ, **ຄພ** 93:36–37. ຄວາມຮູ້ແຈ້ງທີ່ເຮົາໄດ້ຮັບໃນຊີວິດນີ້ ຈະລຸກຂຶ້ນກັບພວກເຮົາໃນການຟື້ນຄືນຊີວິດ, **ຄພ** 130:18–19.

ພຣະຜູ້ເປັນເຈົ້າປົກຄອງຄວາມຮູ້ແຈ້ງທັງໝົດ, **ອຣຮ** 3:21. ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ອັບຣາຮາມເຫັນຜູ້ຄົນທີ່ມີຄວາມຮູ້ແຈ້ງຊຶ່ງຖືກຈັດໄວ້ກ່ອນໂລກເປັນມາ, **ອຣຮ** 3:22.

**ຮູ້ສຶກ.** *ເບິ່ງ* ພຣະວິນຍານບໍລິສຸດ *ນຳອີກ*

ທີ່ຈະຮູ້ສຶກການກະຕຸ້ນຂອງພຣະວິນຍານ

ພວກເຈົ້າມີໃຈແຂງເກີນກວ່າທີ່ຈະຮູ້ສຶກ, ພວກເຈົ້າຈຶ່ງຮູ້ສຶກຄຳຂອງພຣະອົງບໍ່ໄດ້, **1 ນຟ**

17:45. ເມື່ອພວກທ່ານຮູ້ສຶກເຖິງການພອງນີ້, ພວກທ່ານຈະເລີ່ມກ່າວຢູ່ພາຍໃນຕົວເອງວ່າ ມັນເປັນເມັດດີ, **ແອວ** 32:28.

ເຈົ້າຈະຮູ້ສຶກວ່າມັນຖືກຕ້ອງ, **ຄພ** 9:8. ຜູ້ຄົນທັງປວງທີ່ຈະເຂົ້າສູ່ທາງເຂົ້າຂອງບ້ານຂອງພຣະຜູ້ເປັນເຈົ້າຈະຮູ້ສຶກເຖິງອຳນາດຂອງພຣະອົງ, **ຄພ** 109:13.

**ຮູ້ສຶກຜິດ, ຄວາມຮູ້ສຶກຜິດ.** *ເບິ່ງ* ກັບໃຈ, ການກັບໃຈ *ນຳອີກ*

ສະພາບຂອງການໄດ້ເຮັດຜິດ, ຫລື ຄວາມຮູ້ສຶກກິນແໜງ ແລະ ໂສກເສົ້າ ທີ່ມາກັບການບາບ.

ເຂົາໄດ້ເຮັດບາບ ແລະ ມີຄວາມຜິດ, **ລລວ** 6:1–6.

ຖ້າຜູ້ໃດກິນເຂົ້າຈີ່ ຫລື ດື່ມຢ່າງບໍ່ສົມຄວນ ກໍຜິດຕໍ່ພຣະກາຍ ແລະ ໂລຫິດຂອງພຣະເຢຊູ, **1 ກຣທ** 11:27.

ຄົນຜິດຍ່ອມຖືເອົາຄວາມຈິງເປັນເລື່ອງຮຸນແຮງ, **1 ນຟ** 16:2. ພວກເຮົາຈະມີຄວາມຮູ້ອັນສົມບູນກ່ຽວກັບຄວາມຜິດທັງໝົດຂອງພວກເຮົາ, **2 ນຟ** 9:14. ຄວາມຜິດຂອງຂ້າພະເຈົ້າຈຶ່ງຖືກກວາດລ້າງໄປ, **ອນ** 1:6. ມີການລົງໂທດຕັ້ງໄວ້, ຊຶ່ງນຳຄວາມສຳນຶກຜິດຈາກມະໂນທຳມາໃຫ້, **ແອວ** 42:18. ໃຫ້ບາບຂອງລູກເທົ່ານັ້ນເປັນສິ່ງທີ່ກັງວົນໃຈລູກ, ດ້ວຍຄວາມກັງວົນນັ້ນ ມັນຈະນຳລູກລົງມາສູ່ການກັບໃຈ, **ແອວ** 42:29.

ບາງຄົນໃນພວກເຈົ້າເຮັດຄວາມຜິດຕໍ່ເຮົາ, ແຕ່ເຮົາຈະເມດຕາ, **ຄພ** 38:14.

ພຣະບຸດຂອງພຣະເຈົ້າໄດ້ຊົດໃຊ້ແທນຄວາມຜິດດັ້ງເດີມ, **ມຊ** 6:54.

**ຮູບພາບລາມົກ.** *ເບິ່ງ* ການລ່ວງປະເວນີ; ພົມມະຈັນ; ຫລິ້ນຊູ້

**ເຮັດ.** *ເບິ່ງ* ເຊື່ອຟັງ, ການເຊື່ອຟັງ, ຟັງຄວາມ

**ເຮັບເຣີ.** *ເບິ່ງ* ອິດສະຣາເອນ *ນຳອີກ*

ເປັນພາສາຢິວທີ່ລູກຫລານຂອງອິດສະຣາເອນໃຊ້ກັນ.

ຊາວອິດສະຣາເອນໄດ້ໃຊ້ພາສາເຮັບເຣີຈົນເຖິງເວລາທີ່ເຂົາເຈົ້າກັບຈາກການເປັນຊະເລີຍທີ່ບາບີໂລນ, ແລ້ວພາສາອາຣັບໄດ້ກາຍເປັນພາສາທີ່ເຂົາເຈົ້າໃຊ້ກັນ. ໃນຊ່ວງເວລາຂອງພຣະເຢຊູ, ພາສາເຮັບເຣີໄດ້ເປັນພາສາຂອງນັກປາດອາຈານ, ຂອງກົດ, ແລະ ຂອງການຂຽນເລື່ອງສາດສະໜາ.

**ເຮັບໂຣນ**

ເມືອງຢູດາທີ່ເກົ່າແກ່, ຊາວໄມ (ສາມສິບສອງ ກິໂລແມັດ) ພາກໃຕ້ຂອງເຢຣູຊາເລັມ. ມັນເປັນສະຖານທີ່ຝັງສົບຂອງອັບຣາຮາມ ແລະ ຄອບຄົວຂອງເພິ່ນ (ປຖກ 49:29–32). ມັນເປັນຕົວເມືອງຂອງດາວິດໄລຍະຕອນຕົ້ນຂອງການປົກຄອງຂອງເພິ່ນ (2 ຊມອ 5:3–5).

**ເຮກອດ**

ຜູ້ສ້າງເຮືອຊາວນີໄຟໃນພຣະຄຳພີມໍມອນ (ແອວ 63:5–7).

**ເຮເຊກີຢາ**

ກະສັດທີ່ຊອບທຳຄົນໜຶ່ງຂອງປະຊາຊາດຢູດາໃນພຣະຄຳພີເດີມ. ເພິ່ນໄດ້ປົກຄອງເປັນເວລາຊາວເກົ້າປີ, ໃນສະໄໝເອຊາຢາເປັນສາດສະດາໃນຢູດາ (2 ກສ 18–20; 2 ຂຄ 29–32; ອຊຢ 36–39). ເອຊາຢາໄດ້ຊ່ວຍເຫລືອເພິ່ນເລື່ອງການຈັດຕັ້ງສາດສະໜາຈັກ ແລະ ຝ່າຍລັດຖະບານ. ເພິ່ນໄດ້ຢັບຢັ້ງການນັບຖືຮູບບູຊາ ແລະ ໄດ້ຟື້ນຟູພິທີການໃນພຣະວິຫານ. ຊີວິດຂອງເຮເຊກີຢາໄດ້ຍືນຍົງຕໍ່ອອກໄປອີກເປັນເວລາສິບຫ້າປີຜ່ານການອະທິຖານ ແລະ ສັດທາ (2 ກສ 20:1–7). ການປົກຄອງຂອງເພິ່ນໃນຕອນຕົ້ນກໍຈະເລີນກ້າວໜ້າ, ແຕ່ການກະບົດຂອງເພິ່ນຕໍ່ກະສັດຂອງອັດຊີເຣຍ (2 ກສ 18:7) ໄດ້ເຮັດໃຫ້ ທະຫານອັດຊີເຣຍຍົກທັບມາຕີສອງເທື່ອ: ເທື່ອທຳອິດໄດ້ຖືກບັນຍາຍໄວ້ຢູ່ໃນ ເອຊາຢາ 10:24–32, ເທື່ອທີສອງໃນ 2 ກະສັດ 18:13–19:7. ໃນການຍົກທັບມາຕີເທື່ອທີສອງ, ເຢຣູຊາເລັມໄດ້ຖືກຮັກສາໄວ້ໂດຍທູດຂອງພຣະຜູ້ເປັນເຈົ້າ (2 ກສ 19:35).

**ເຮໂຣດ**

ຄອບຄົວຂອງເຈົ້າເມືອງໃນຢູດາຍໃກ້ສະ

ໄໝຂອງພຣະເຢຊູຄຣິດ. ເຂົາເຈົ້າເປັນບຸກຄົນທີ່ສຳຄັນໃນເຫດການຫລາຍຢ່າງທີ່ໄດ້ເກີດຂຶ້ນໃນພຣະຄຳພີໃໝ່. ຄອບຄົວໄດ້ຖືກຈັດຕັ້ງຂຶ້ນໂດຍກະສັດເຮໂຣດ, ຜູ້ມີຄວາມຢ້ານກົວຫລາຍຕໍ່ການກຳເນີດຂອງພຣະຜູ້ຊ່ວຍໃຫ້ລອດ (ມທ 2:3) ແລະ ໄດ້ອອກຄຳສັ່ງໃຫ້ຂ້າເດັກແດງທາລົກທັງໝົດຢູ່ໃນເບັດເລເຮັມ. ພວກລູກຊາຍຂອງເພິ່ນລວມທັງ ອາຣິສະໂຕບູໂລ; ເຮໂຣດ ຟີລິບ (ມທ 14:3; ມຣກ 6:17); ເຮໂຣດ ອັນຕິປາ, ຜູ້ປົກຄອງ (ມທ 14:1; ລກ 9:7; ຮູ້ຈັກກັນວ່າ ກະສັດເຮໂຣດນຳອີກ, ມຣກ 6:14); ອາເຄລາວ (ມທ 2:22); ແລະ ຟີລິບ, ຜູ້ປົກຄອງເຂດແດນອີຕູຣາຍ (ລກ 3:1). ເຮໂຣດ ອັກຄຣິປາ ອົງທີໜຶ່ງ (ກຈກ 12:1–23) ແລະ ນ້ອງສາວຂອງເພິ່ນຊື່ ເຮໂຣເດຍ (ມທ 14:3; ມຣກ 6:17) ເປັນລູກຂອງ ອາຣິສະໂຕບູໂລ. ເຮໂຣດ ອັກຄຣິປາ ອົງທີໜຶ່ງ ມີລູກຫລາຍຄົນຄືກັນທີ່ໄດ້ກ່າວເຖິງໃນພຣະຄຳພີໃໝ່, ລວມທັງ ເຮໂຣດ ອັກຄຣິປາ ອົງທີສອງ (ກຈກ 25:13), ເບນີເກ (ກຈກ 25:13), ແລະ ດູຊິນລາ, ເມຍຂອງເຟລິກ (ກຈກ 24:24).

**ເຮໂຣເດຍ**

ນ້ອງສາວຂອງເຮໂຣດ ອັກຄຣິປາ ໃນພຣະຄຳພີໃໝ່. ນາງໄດ້ແຕ່ງງານກັບລຸງຂອງນາງ, ເຮໂຣດ ຟີລິບ, ຊຶ່ງນາງໄດ້ມີລູກສາວຄົນໜຶ່ງນຳ ຊື່ວ່າ ຊາໂລເມ. ນາງພ້ອມດ້ວຍນາງຊາໂລເມໄດ້ວາງແຜນຕັດຫົວຂອງໂຢຮັນບັບຕິສະໂຕ (ມທ 14:3–11).

**ແຮຣິສ, ມາຕິນ.** *ເບິ່ງ* ພະຍານຂອງພຣະຄຳພີມໍມອນ *ນຳອີກ*

ເປັນຄົນໜຶ່ງໃນພະຍານສາມຄົນເຖິງທີ່ມາ ແລະ ຄວາມຈິງແທ້ອັນສູງສົ່ງຂອງພຣະຄຳພີມໍມອນ. ເພິ່ນໄດ້ຊ່ວຍເຫລືອໂຈເຊັບ ສະມິດ ແລະ ສາດສະໜາຈັກທາງຝ່າຍການເງິນ. ພຣະຜູ້ເປັນເຈົ້າໄດ້ຂໍໃຫ້ມາຕິນ ແຮຣິສ ຂາຍຊັບສົມບັດຂອງເພິ່ນ ແລະ ມອບເງິນທຶນຂອງເພິ່ນໃຫ້ເປັນຄ່າໃຊ້ຈ່າຍສຳລັບການພິມພຣະຄຳພີມໍມອນ (ຄພ 19:26–27, 34–35); ເພື່ອເປັນຕົວຢ່າງແກ່ສາດສະໜາຈັກ (ຄພ 58:35); ແລະ ເພື່ອຊ່ວຍໃຊ້ຈ່າຍເລື່ອງການປະຕິບັດສາດສະໜາກິດ (ຄພ 104:26).

ມາຕິນ ແຮຣິສ ໄດ້ຖືກໄລ່ອອກຈາກສາດສະໜາຈັກ ແຕ່ຕໍ່ມາໄດ້ກັບຄືນສູ່ການເປັນສະມາຊິກຢ່າງສົມບູນ. ຈົນເຖິງມື້ຕາຍຂອງເພິ່ນ, ເພິ່ນໄດ້ເປັນພະຍານວ່າເພິ່ນໄດ້ເຫັນທູດໂມໂຣໄນ ແລະ ແຜ່ນຈາລຶກຄຳ ຊຶ່ງຈາກແຜ່ນຈາລຶກນັ້ນ ໂຈເຊັບ ສະມິດ ໄດ້ແປພຣະຄຳພີມໍມອນ.

**ໂຮງຮຽນຂອງສາດສະດາ.** *ເບິ່ງ* ສະມິດ, ໂຈເຊັບ, ຜູ້ລູກ *ນຳອີກ*

ໃນເມືອງເຄີດແລນ, ລັດໂອໄຮໂອ (ສະຫະລັດອາເມຣິກາ), ລະຫວ່າງລະດູໜາວ ປີ 1832–1833, ພຣະຜູ້ເປັນເຈົ້າໄດ້ບັນຊາໂຈເຊັບ ສະມິດ ໃຫ້ຈັດຕັ້ງໂຮງຮຽນຂຶ້ນ ເພື່ອຈຸດປະສົງຂອງການເຝິກຝົນບັນດາອ້າຍນ້ອງໃນທຸກເລື່ອງທີ່ກ່ຽວກັບພຣະກິດຕິຄຸນ ແລະ ອານາຈັກຂອງພຣະເຈົ້າ. ຜູ້ນຳທັງຫລາຍໃນຕອນຕົ້ນຂອງສາດສະໜາຈັກ ໄດ້ມາຈາກໂຮງຮຽນນີ້. ໂຮງຮຽນອີກບ່ອນໜຶ່ງຂອງສາດສະດາ ຫລື ແອວເດີ ໄດ້ຖືກຈັດຕັ້ງຂຶ້ນ ໂດຍ ພາລີພີ ພະແຣັດ ໃນ ເຂດແຈັກສັນ, ລັດມີເຊີຣີ (ຄພ 97:1–6). ໂຮງຮຽນທີ່ເໝືອນກັນນີ້ ກໍໄດ້ຖືກຈັດຕັ້ງຂຶ້ນ ບໍ່ດົນຫລັງຈາກທີ່ໄພ່ພົນຂອງພຣະເຈົ້າໄດ້ອົບພະຍົບໄປຫາພາກຕາເວັນຕົກ; ເຖິງຢ່າງໃດກໍຕາມ, ໂຮງຮຽນດັ່ງກ່າວໄດ້ຖືກປິດບໍ່ດົນຫລັງຈາກນັ້ນ. ການສອນພຣະກິດຕິຄຸນໃນທຸກວັນນີ້ ໄດ້ກະທຳຢູ່ໃນບ້ານເຮືອນ, ກຸ່ມຖານະປະໂລຫິດ, ແລະ ໃນອົງການຊ່ວຍເຫລືອຕ່າງໆ, ແລະ ຜ່ານທາງໂຮງຮຽນ ແລະ ຫ້ອງຮຽນສາດສະໜາ ແລະ ສະຖາບັນຂອງສາດສະໜາຈັກ.

ຈົ່ງຊຳລະຕົນໃຫ້ບໍລິສຸດ ແລະ ສອນຄຳສອນຂອງອານາຈັກໃຫ້ກັນແລະກັນ, **ຄພ** 88:74–80. ຈົ່ງສະແຫວງຫາຢ່າງພາກພຽນ, ແລະ ສອນກັນແລະກັນ, **ຄພ** 88:118–122. ລະບຽບຂອງໂຮງຮຽນຂອງສາດສະດາໄດ້ຖືກຕັ້ງໄວ້, **ຄພ** 88:127–141. ຝ່າຍປະທານສູງສຸດມີຂໍກະແຈສຳລັບໂຮງຮຽນຂອງສາດສະດາ, **ຄພ** 90:6–7.

**ໂຮຊັນນາ**

ຈາກຄຳເຮັບເຣີ ມັນໝາຍຄວາມວ່າ "ຂໍໃຫ້ຊ່ວຍເຫລືອພວກເຮົາແດ່ທ້ອນ" ແລະ ຖືກໃຊ້ເປັນຄຳສັນລະເສີນ ແລະ ຄຳອ້ອນວອນ.

ໃນງານລ້ຽງສະຫລອງສະຖານທີ່ນະມັດສະການ, ຊຶ່ງສະເຫລີມສະຫລອງທີ່ພຣະຜູ້ເປັນເຈົ້າໄດ້ນຳພາຊາວອິດສະຣາເອນເຂົ້າໄປຫາແຜ່ນດິນແຫ່ງຄຳສັນຍາ, ຜູ້ຄົນໄດ້ກ່າວຖ້ອຍຄຳໃນ ເພງສັນລະເສີນ 118 ແລະ ໄດ້ແກວ່ງກ້ານຕານ. ໃນຕອນພຣະຜູ້ເປັນເຈົ້າໄດ້ເຂົ້າໄປໃນເຢຣູຊາເລັມຢ່າງຜູ້ມີໄຊ, ຝູງຊົນໄດ້ຮ້ອງໂຮວ່າ "ໂຮຊັນນາ" ແລະ ໄດ້ວາງກ້ານຕານປູທາງໃຫ້ພຣະເຢຊູເດີນໄປ, ເພື່ອເປັນການສະແດງເຖິງຄວາມເຂົ້າໃຈຂອງເຂົາເຈົ້າວ່າ ພຣະເຢຊູເປັນພຣະຜູ້ເປັນເຈົ້າອົງດຽວທີ່ໄດ້ປົດປ່ອຍຊາວອິດສະຣາເອນໃນສະໄໝບູຮານ (ພສສ 118:25–26; ມທ 21:9, 15; ມຣກ 11:9–10; ຢຮ 12:13). ຜູ້ຄົນເຫລົ່ານີ້ໄດ້ຮັບຮູ້ພຣະຄຣິດວ່າເປັນພຣະເມຊີອາທີ່ເຂົາເຈົ້າໄດ້ລໍຖ້າມາເປັນເວລາດົນນານ. ຄຳວ່າ ໂຮຊັນນາ ໄດ້ກາຍເປັນການສະເຫລີມສະຫລອງຂອງພຣະເມຊີອາ ໃນທຸກຍຸກທຸກສະໄໝ (1 ນຟ 11:6; 3 ນຟ 11:14–17). ມີການໂຮຮ້ອງ ໂຮຊັນນາ ຕອນອຸທິດພຣະວິຫານເຄີດແລນ (ຄພ 109:79) ແລະ ບັດນີ້ ມັນກໍເປັນພາກສ່ວນໜຶ່ງໃນການອຸທິດພຣະວິຫານໃນປະຈຸບັນ.

**ໂຮເຊອາ**

ສາດສະດາໃນພຣະຄຳພີເດີມຜູ້ໄດ້ທຳນາຍໃນອານາຈັກພາກເໜືອຂອງອິດສະຣາເອນ ໃນໄລຍະການປົກຄອງຕອນທ້າຍຂອງເຢໂຣໂບອາມ ອົງທີສອງ. ເພິ່ນໄດ້ມີຊີວິດຢູ່ໃນວັນເວລາທີ່ປະເທດຊາດກຳລັງຊຸດໂຊມ ແລະ ຫລົ້ມຈົມ, ເນື່ອງດ້ວຍບາບຂອງຊາວອິດສະຣາເອນ.

*ພຣະທຳໂຮເຊອາ:* ເນື້ອຄວາມຂອງໜັງສືເຫລັ້ມນີ້ແມ່ນກ່ຽວກັບຄວາມຮັກຂອງພຣະເຈົ້າທີ່ມີຕໍ່ຜູ້ຄົນຂອງພຣະອົງ. ການຕິສອນທັງໝົດຂອງພຣະອົງແມ່ນກະທຳໄປດ້ວຍຄວາມຮັກ, ແລະ ການນຳຊາວອິດສະຣາເອນກັບຄືນມາເພາະຄວາມຮັກຂອງພຣະອົງ (ຮສອ 2:19; 14:4). ກົງກັນຂ້າມ, ໂຮເຊອາໄດ້ສະແດງໃຫ້ເຫັນເຖິງເລ່ຫລ່ຽມ ແລະ ຄວາມບໍ່ຊື່ສັດຂອງຊາວອິດສະຣາເອນ. ເຖິງຢ່າງໃດກໍຕາມ ພຣະເຈົ້າຍັງລໍຄອຍການໄຖ່ອິດສະຣາເອນເທື່ອສຸດທ້າຍຢູ່ (ຮສອ 11:12–14:9).

**ຮ້ອງ.** *ເບິ່ງ* ດົນຕີ, ເພງ; ເພງສວດ *ນຳອີກ*

ເພື່ອນະມັດສະການ ແລະ ສັນລະເສີນພຣະເຈົ້າໃນສຽງເພງ ແລະ ຖ້ອຍຄຳຂອງເນື້ອຮ້ອງ.

ຮ້ອງເພງຖວາຍແດ່ພຣະຜູ້ເປັນເຈົ້າ, **1 ຂຄ** 16:23–36 (ພສສ 96). ຈົ່ງຮ້ອງບົດເພງຍ້ອງຍໍສັນລະເສີນພຣະຜູ້ເປັນເຈົ້າ, ແລະ ຈົ່ງຂອບພຣະຄຸນ, **ພສສ** 30:4. ຈົ່ງຮ້ອງເພງສັນລະເສີນແດ່ພຣະຜູ້ເປັນເຈົ້າ, **ພສສ** 100:1.

ເມື່ອພວກເພິ່ນຮ້ອງເພງສັນລະເສີນບົດໜຶ່ງແລ້ວ, ກໍພາກັນອອກໄປຍັງພູໝາກກອກເທດ, **ມທ** 26:30.

ພຣະວິນຍານບໍລິສຸດໄດ້ນຳພາພວກເຂົາຮ້ອງເພງ, **ມຣນ** 6:9.

ເພງຂອງຄົນຊອບທຳເປັນຄຳອະທິຖານຫາເຮົາ, **ຄພ** 25:12. ຖ້າຫາກພວກເຈົ້າມ່ວນຊື່ນ, ຈົ່ງສັນລະເສີນພຣະຜູ້ເປັນເຈົ້າດ້ວຍການຮ້ອງເພງ, **ຄພ** 136:28.

**ຮອບຮູ້ທຸກຢ່າງ.** *ເບິ່ງ* ພຣະເຈົ້າ, ຝ່າຍພຣະເຈົ້າ *ນຳອີກ*

ລັກສະນະພິເສດຈຳເພາະແຫ່ງສະຫວັນເຖິງການມີຄວາມຮູ້ແຈ້ງໃນທຸກເລື່ອງ (ມທ 6:8; 2 ນຟ 2:24).

**ຮຽບຮ້ອຍ, ຄວາມຮຽບຮ້ອຍ.** *ເບິ່ງ* ຖ່ອມຕົນ, ຄວາມຖ່ອມຕົນ *ນຳອີກ*

ການປະພຶດ ຫລື ການປະກົດຕົວ ທີ່ຖ່ອມຕົວ, ພໍສົມຄວນ, ແລະ ເໝາະສົມ. ຄົນທີ່ຮຽບຮ້ອຍ ຈະຫລີກເວັ້ນຈາກການເຮັດເກີນຕົວ ແລະ ການທຳທ່າເຮັດ.

ພຣະເຈົ້າໄດ້ໃຫ້ເສື້ອທີ່ເຮັດດ້ວຍໜັງສັດແກ່ອາດາມ ແລະ ເອວານຸ່ງ, **ປຖກ** 3:21 (ມຊ 4:27).

ພວກຜູ້ຍິງແຕ່ງຕົວຢ່າງສຸພາບຮຽບຮ້ອຍ,

**1 ຕມທ** 2:9. ໃຫ້ເປັນຄົນມີສະຕິອັນຮອບຄອບ, ເປັນຄົນບໍລິສຸດ, ເປັນຄົນເອົາໃຈໃສ່ໃນວຽກບ້ານການເຮືອນ, **ຕຕ** 2:5.

ຫລາຍ ຄົນ ຄິດ ລະ ເມີ ເພີ້ ຝັນ ດ້ວຍ ຄວາມທະນົງໃຈຫລາຍ ຍ້ອນວ່າເຄື່ອງນຸ່ງລາຄາແພງຂອງພວກເຂົາ, **ຢຄ** 2:13.

ຈົ່ງໃຫ້ອາພອນທັງໝົດຂອງພວກເຈົ້າຮຽບຮ້ອຍ, **ຄພ** 42:40.

ພວກເຮົາເຊື່ອໃນການເປັນຄົນບໍລິສຸດ ແລະມີຄຸນນະທຳ, **ຫຼຊ** 1:13.

**ເຮືອໃຫຍ່.** *ເບິ່ງ* ໂນອາ, ປິຕຸໃນພຣະຄຣິສຕະທຳຄຳພີ; ນ້ຳຖ້ວມໃນວັນເວລາຂອງໂນອາ; ຮຸ້ງກິນນ້ຳ *ນຳອີກ*

ໃນພຣະຄຳພີເດີມ, ເປັນເຮືອທີ່ໄດ້ຖືກສ້າງຂຶ້ນໂດຍໂນອາ ເພື່ອຮັກສາສິ່ງທີ່ມີຊີວິດໃນຊ່ວງໄລຍະນ້ຳຖ້ວມ.

ຈົ່ງສ້າງເຮືອລຳໜຶ່ງດ້ວຍໄມ້ແກ່ນສຳລັບເຈົ້າເອງ, **ປຖກ** 6:14. ເຮືອໄດ້ຄ້າງຢູ່ເທິງພູອາຣາຣັດ, **ປຖກ** 8:4.

ເຮືອຂອງຊາວຢາເຣັດແມ່ນແໜ້ນໜາຄືກັນກັບເຮືອຂອງໂນອາ, **ອທ** 6:7.

**ເຮົາເປັນ.** *ເບິ່ງ* ພຣະເຢຊູຄຣິດ; ເຢໂຮວາ *ນຳອີກ*

ພຣະນາມໜຶ່ງອີກຂອງອົງພຣະເຢຊູຄຣິດເຈົ້າ.

ພຣະເຈົ້າໄດ້ກ່າວກັບໂມເຊວ່າ, ເຮົາເປັນຜູ້ເຮົາເປັນ, **ອພຍ** 3:14–15. ເຮົາແມ່ນພຣະຜູ້ເປັນເຈົ້າ, **ອພຍ** 6:2–3.

ກ່ອນອັບຣາຮາມເກີດ ເຮົານີ້ກໍເປັນຢູ່ແລ້ວ, **ຢຮ** 8:56–59.

ຈົ່ງຟັງສຽງຂອງພຣະເຢຊູຄຣິດ, ເຮົາເປັນຜູ້ຍິ່ງໃຫຍ່, **ຄພ** 29:1 (ຄພ 38:1; 39:1).

# ລຳດັບປະຫວັດສາດ

ລຳດັບປະຫວັດສາດຫຍໍ້ດັ່ງຕໍ່ໄປນີ້ ສາມາດຊ່ວຍທ່ານໃຫ້ເຫັນລຳດັບຂອງເຫດການທີ່ເກີດຂຶ້ນໃນສະໄໝຂອງພຣະຄຣິສຕະທຳຄຳພີ ແລະ ພຣະຄຳພີມໍມອນ. ຫລາຍວັນທີຖືກປະມານໃກ້ຄຽງ, ໂດຍສະເພາະໃນສະໄໝຂອງພຣະຄຳພີເດີມ.

---

**ເຫດການຕ່າງໆໃນສະໄໝຂອງປີຕຸດັ້ງເດີມ.** (ເນື່ອງດ້ວຍວ່າບໍ່ຮູ້ຈັກຄັກແນ່ກ່ຽວກັບວັນທີຂອງເຫດການທີ່ເກີດຂຶ້ນຢູ່ໃນພາກນີ້, ຈຶ່ງບໍ່ໄດ້ບອກວັນທີ.)

ກ່ອນ ຄ.ສ. (ຫລື ກ.ຄ.ສ.—ກ່ອນຄຣິສຕະສັກກະລາດ)

4000 ອາດາມຕົກ.

ເອນົກປະຕິບັດສາດສະໜາກິດ.

ໂນອາປະຕິບັດສາດສະໜາກິດ; ນ້ຳຖ້ວມແຜ່ນດິນໂລກ.

ການສ້າງຫໍບາເບນ; ຊາວຢາເຣັດເດີນທາງໄປຫາແຜ່ນດິນແຫ່ງຄຳສັນຍາ.

ເມນຄີເສເດັກປະຕິບັດສາດສະໜາກິດ.

ໂນອາສິ້ນຊີວິດ.

ອັບຣາມ (ອັບຣາຮາມ) ເກີດ.

ອີຊາກເກີດ.

ຢາໂຄບເກີດ.

ໂຢເຊັບເກີດ.

ໂຢເຊັບຖືກຂາຍໄປປະເທດເອຢິບ.

ໂຢເຊັບເຂົ້າເຝົ້າຟາຣາໂອ.

ຢາໂຄບ (ອິດສະຣາເອນ) ແລະ ຄອບຄົວຂອງເພິ່ນລົງໄປຍັງປະເທດເອຢິບ.

ຢາໂຄບ (ອິດສະຣາເອນ) ສິ້ນຊີວິດ.

ໂຢເຊັບສິ້ນຊີວິດ.

ໂມເຊເກີດ.

ໂມເຊນຳລູກຫລານຂອງອິດສະຣາເອນອອກຈາກປະເທດເອຢິບ (ອົບພະຍົບ).

ໂມເຊໄດ້ຮັບການປ່ຽນແປງສະພາບ.

ໂຢຊວຍສິ້ນຊີວິດ.

ຫລັງຈາກໂຢຊວຍສິ້ນຊີວິດ, ຊ່ວງເວລາຂອງຜູ້ຕັດສິນໄດ້ເລີ່ມຕົ້ນ, ຜູ້ຕັດສິນຄົນທຳອິດແມ່ນໂອດນີເອນ ແລະ ຄົນສຸດທ້າຍແມ່ນຊາມູເອນ; ລຳດັບ ແລະ ວັນທີຂອງຜູ້ຕັດສິນຄົນອື່ນໆແມ່ນບໍ່ຮູ້ຈັກຄັກແນ່.

ໂຊນໄດ້ຖືກເຈີມເປັນກະສັດ.

**ເຫດການຕ່າງໆຂອງສະຫະອານາຈັກແຫ່ງອິດສະຣາເອນ**

1095 ເລີ່ມຕົ້ນສະໄໝການປົກຄອງຂອງໂຊນ.

1063 ຊາມູເອນເຈີມດາວິດໃຫ້ເປັນກະສັດ.

1055 ດາວິດເປັນກະສັດໃນເຮັບໂຣນ.

1047 ດາວິດເປັນກະສັດໃນກຸງເຢຣູຊາເລັມ; ນາທານ ແລະ ກາດ ທຳນາຍ.

1015 ໂຊໂລໂມນເປັນກະສັດແຫ່ງອິດສະຣາເອນທັງໝົດ.

991 ພຣະວິຫານສຳເລັດ.

975 ໂຊໂລໂມນສິ້ນຊີວິດ; ສິບເຜົ່າທາງເໜືອເຮັດການກະບົດຕ້ານເຣໂຮໂບອາມ ລູກຊາຍຂອງເພິ່ນ ແລະ ຊາວອິດສະຣາເອນແບ່ງແຍກ.

| **ເຫດການຕ່າງໆຂອງອິດສະຣາເອນ** | **ເຫດການຕ່າງໆຂອງຢູດາ** | **ເຫດການຕ່າງໆໃນປະຫວັດສາດຂອງພຣະຄຳພີມໍມອນ** |
|---|---|---|
| 975 ເຢໂຣໂບອາມເປັນກະສັດແຫ່ງອິດສະຣາເອນ. | | |
| | 949 ຊີຊາກ, ກະສັດແຫ່ງເອຢິບ, ປຸ້ນສະດົມເຢຣູຊາເລັມ. | |
| 875 ອາຮາບປົກຄອງອິດສະຣາເອນພາກເໜືອໃນຊາມາເຣຍ; ເອລີຢາທຳນາຍ. | | |
| 851 ເອລີຊາເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງ. | | |
| 792 ອາໂມທຳນາຍ. | | |
| 790 ໂຢນາ ແລະ ໂຮເຊອາທຳນາຍ. | | |
| | 740 ເອຊາຢາເລີ່ມຕົ້ນທຳນາຍ. (ກຸງໂຣມໄດ້ຖືກສ້າງຕັ້ງຂຶ້ນ; ນາໂບບັດສາເປັນກະສັດແຫ່ງບາບີໂລນ ໃນປີ 747; ຕີກະລາດ-ປີເລເຊອີງທີສາມ ເປັນກະສັດແຫ່ງອັດຊີເຣຍ ຈາກ 747 ເຖິງ 734.) | |

| ເຫດການຕ່າງໆຂອງອິດສະຣາເອນ | ເຫດການຕ່າງໆຂອງຢູດາ | ເຫດການຕ່າງໆໃນປະຫວັດສາດຂອງພຣະຄຳພີມໍມອນ |
|---|---|---|
| | 728 ເຮເຊກີຢາເປັນກະສັດແຫ່ງຢູດາ. (ຊານມາເນເຊີອົງທີສີ່ ເປັນກະສັດແຫ່ງອັດຊີເຣຍ.) | |
| 721 ອານາຈັກພາກເໜືອຖືກທຳລາຍ; ສິບເຜົ່າຖືກເອົາໄປເປັນຊະເລີຍ; ມີກາທຳນາຍ. | | |
| | 642 ນາຮູມທຳນາຍ. | |
| | 628 ເຢເຣມີຢາ ແລະ ເສຟານີຢາທຳນາຍ. | |
| | 609 ໂອບາດີຢາທຳນາຍ; ດານີເອນຖືກເອົາໄປເປັນຊະເລີຍທີ່ບາບີໂລນ. (ນີເນເວລົ້ມສະຫລາຍໃນ 606; ເນບູກາດເນັດສາເປັນກະສັດແຫ່ງບາບີໂລນ ຈາກ 604 ເຖິງ 561.) | |
| | | 600 ລີໄຮອອກຈາກເຢຣູຊາເລັມ. |
| | 598 ເອເຊກຽນທຳນາຍໃນບາບີໂລນ; ຮາບາກຸກທຳນາຍ; ເຊເດກີຢາເປັນກະສັດແຫ່ງຢູດາ. | |
| | | 588 ມິວເລັກເດີນທາງຈາກເຢຣູຊາເລັມໄປຫາແຜ່ນດິນແຫ່ງຄຳສັນຍາ. |
| | | 588 ຊາວນີໄຟແຍກອອກຈາກຊາວເລມັນ (ລະຫວ່າງ 588 ແລະ 570). |
| | 587 ເນບູກາດເນັດສາຍຶດຄອງເຢຣູຊາເລັມ. | |

| ເຫດການຕ່າງໆໃນປະຫວັດສາດຂອງຊາວຢິວ | ເຫດການຕ່າງໆໃນປະຫວັດສາດຂອງພຣະຄຳພີມໍມອນ |
|---|---|
| 537 ໄຊຣັດໄດ້ອະນຸຍາດໃຫ້ຊາວຢິວກັບຈາກບາບີໂລນ. | |

| ເຫດການຕ່າງໆໃນປະຫວັດສາດຂອງຊາວຢິວ | | ເຫດການຕ່າງໆໃນປະຫວັດສາດຂອງພຣະຄຳພີມໍມອນ | |
|---|---|---|---|
| 520 | ຮັກກາຍ ແລະ ເຊກາຣີຢາທຳນາຍ. | | |
| 486 | ຊ່ວງຊີວິດຂອງເອສະເທີ. | | |
| 458 | ເອຊະຣາຖືກມອບໝາຍໃຫ້ປະຕິຮູບ. | | |
| 444 | ເນເຫມີຢາຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຢູດາຍ. | | |
| 432 | ມາລາກີທຳນາຍ. | | |
| | | 400 | ເຈຣອມໄດ້ຮັບແຜ່ນຈາລຶກ. |
| | | 360 | ອອມໄນໄດ້ຮັບແຜ່ນຈາລຶກ. |
| 332 | ອາເລັກຊັນເດີມະຫາລາດເອົາຊະນະຊີເຣຍ ແລະ ເອຢິບ. | | |
| 323 | ອາເລັກຊັນເດີສິ້ນຊີວິດ. | | |
| 277 | ການແປພຣະຄຳພີເດີມສະໄໝບູຮານຂອງຊາວຢິວເປັນພາສາກຣີກ ໄດ້ເລີ່ມຕົ້ນ. | | |
| 167 | ມັດຕາເທຍຕະກຸນມາກາບີກະບົດຕໍ່ຊີເຣຍ. | | |
| 166 | ຢູດາ ມາກາບາອຸດ ເປັນຜູ້ນຳຂອງຊາວຢິວ. | | |
| 165 | ພຣະວິຫານຖືກຊຳລະລ້າງ ແລະ ຖືກອຸທິດຄືນໃໝ່; ຮານຸກາເກີດຂຶ້ນ. | | |
| 161 | ຢູດາ ມາກາບາອຸດ ສິ້ນຊີວິດ. | | |
| | | 148 | ອະບີນາໄດຖືກຂ້າຍ້ອນຄວາມເຊື່ອ; ແອວມາສະຖາປະນາສາດສະໜາຈັກຄືນໃໝ່ໃນບັນດາຊາວນີໄຟ. |
| | | 124 | ເບັນຢາມິນກ່າວຄຳປາໄສເທື່ອສຸດທ້າຍຂອງເພິ່ນຕໍ່ຊາວນີໄຟ. |
| | | 100 | ແອວມາຜູ້ເປັນລູກ ແລະ ພວກລູກຊາຍຂອງໂມໄຊຢາເລີ່ມຕົ້ນວຽກງານຂອງເຂົາເຈົ້າ. |
| | | 91 | ການປົກຄອງຂອງຜູ້ຕັດສິນເລີ່ມຕົ້ນໃນບັນດາຊາວນີໄຟ. |
| 63 | ປອມເປເອົາຊະນະເຢຣູຊາເລັມ, ແລະ ການປົກຄອງຂອງພວກມາກາບີສິ້ນສຸດລົງໃນອິດສະຣາເອນ, ການປົກຄອງຂອງໂຣມໄດ້ເລີ່ມຕົ້ນ. | | |
| 51 | ຄລີໂອພາທຣາປົກຄອງ. | | |

| ເຫດການຕ່າງໆໃນປະຫວັດສາດຂອງຊາວຍິວ | | ເຫດການຕ່າງໆໃນປະຫວັດສາດຂອງພຣະຄຳພີມໍມອນ | |
|---|---|---|---|
| 41 | ເຮໂຣດ ແລະ ຟາຊາເອນ ເປັນສອງຄົນທີ່ໄດ້ເປັນຜູ້ປົກຄອງຢູດາຍຮ່ວມກັນ. | | |
| 37 | ເຮໂຣດເປັນຜູ້ນຳໃນເຢຣູຊາເລັມ. | | |
| 31 | ການຕໍ່ສູ້ທີ່ອັກຕີອູມ; ໂອຄຸໂຕເປັນຈັກກະພັດຂອງໂຣມ ຈາກ 31 ປີ ກ່ອນ ຄ.ສ. ເຖິງ ຄ.ສ. 14. | | |
| 30 | ຄລີໂອພາທຣາສິ້ນຊີວິດ. | | |
| 17 | ເຮໂຣດສ້ອມແປງພຣະວິຫານ. | | |
| | | 6 | ຊາມູເອນຄົນເລມັນທຳນາຍການກຳເນີດຂອງພຣະຄຣິດ. |

| ເຫດການຕ່າງໆໃນປະຫວັດສາດຂອງຊາວຄຣິດສະຕຽນ | | ເຫດການຕ່າງໆໃນປະຫວັດສາດຂອງພຣະຄຳພີມໍມອນ | |
|---|---|---|---|
| ຄ.ສ. | | ຄ.ສ. | |
| | ການກຳເນີດຂອງພຣະເຢຊູຄຣິດ. | | |
| 30 | ການປະຕິບັດສາດສະໜາກິດຂອງພຣະຄຣິດເລີ່ມຕົ້ນ. | | |
| 33 | ພຣະຄຣິດຖືກຄຶງ. | 33 ຫລື 34 | ພຣະຄຣິດທີ່ຟື້ນຄືນພຣະຊົນປະກົດໃນອາເມຣິກາ. |
| 35 | ໂປໂລປ່ຽນໃຈເຫລື້ອມໃສ. | | |
| 45 | ໂປໂລອອກເດີນທາງໄປເຜີຍແຜ່ສາດສະໜາເທື່ອທຳອິດ. | | |
| 58 | ໂປໂລຖືກສົ່ງໄປໂຣມ. | | |
| 61 | ປະຫວັດສາດກິດຈະການຂອງອັກຄະສາວົກສິ້ນສຸດລົງ. | | |
| 62 | ໂຣມຖືກໄຟໄໝ້; ຊາວຄຣິດສະຕຽນຖືກຂົ່ມເຫັງພາຍໃຕ້ເນໂຣ. | | |
| 70 | ຊາວຄຣິດສະຕຽນໄປເປລາ; ເຢຣູຊາເລັມຖືກລ້ອມ ແລະ ຖືກຍຶດ. | | |
| 95 | ຊາວຄຣິດສະຕຽນຖືກຊາວໂດໄມຂົ່ມເຫັງ. | | |
| | | 385 | ປະຊາຊາດນີໄຟຖືກທຳລາຍ. |
| | | 421 | ໂມໂຣໄນເຊື່ອງແຜ່ນຈາລຶກໄວ້. |

# ຄວາມກົມກຽວຂອງພຣະກິດຕິຄຸນ

ຄຳສອນຂອງພຣະຜູ້ຊ່ວຍໃຫ້ລອດໃນມັດທາຍ, ມາຣະໂກ, ລູກາ, ແລະ ໂຢຮັນ ສາມາດປຽບທຽບໃສ່ກັນໄດ້ ແລະ ໃສ່ກັບການເປີດເຜີຍຂອງຍຸກສຸດທ້າຍ ໃນວິທີທາງດັ່ງຕໍ່ໄປນີ້.

| **ເຫດການ** | **ມັດທາຍ** | **ມາຣະໂກ** | **ລູກາ** | **ໂຢຮັນ** | **ການເປີດເຜີຍຍຸກສຸດທ້າຍ** |
|---|---|---|---|---|---|
| ລຳດັບການສືບເຊື້ອສາຍຂອງພຣະເຢຊູ | 1:1–17 | | 3:23–38 | | |
| ການເກີດຂອງໂຢຮັນບັບຕິສະໂຕ | | | 1:5–25, 57–58 | | |
| ການກຳເນີດຂອງພຣະເຢຊູ | 2:1–15 | | 2:6–7 | | 1 ນຟ 11:18–20; 2 ນຟ 17:14; ມຊຢ 3:5–8; ແອວ 7:10; ຮລມ 14:5–12; 3 ນຟ 1:4–22 |
| ຄຳທຳນາຍຂອງຊີເມໂອນ ແລະ ອານາ | | | 2:25–39 | | |
| ຢ້ຽມຢາມພຣະວິຫານ (ງານປັດສະຄາ) | | | 2:41–50 | | |
| ການປະຕິບັດສາດສະໜາກິດຂອງໂຢຮັນເລີ່ມຕົ້ນ | 3:1, 5–6 | 1:4 | 3:1–3 | | ຄພ 35:4; 84:27–28 |
| ການບັບຕິສະມາຂອງພຣະເຢຊູ | 3:13–17 | 1:9–11 | 3:21–22 | 1:31–34 | 1 ນຟ 10:7–10; 2 ນຟ 31:4–21 |
| ພຣະເຢຊູຖືກລໍ້ລວງ | 4:1–11 | 1:12–13 | 4:1–13 | | |
| ປະຈັກພະຍານຂອງໂຢຮັນບັບຕິສະໂຕ | | | | 1:15–36 | ຄພ 93:6–18, 26 |
| ງານສົມຣົດທີ່ບ້ານການາ (ສິ່ງມະຫັດສະຈັນເທື່ອທຳອິດຂອງພຣະເຢຊູ) | | | | 2:1–11 | |
| ການຊຳລະພຣະວິຫານເທື່ອທຳອິດ | | | | 2:14–17 | |
| ການຢ້ຽມຢາມຂອງນີໂກເດມ | | | | 3:1–21 | |
| ຍິງໄທຊາມາເຣຍທີ່ນໍ້າສ້າງ | | | | 4:1–42 | |
| ພຣະເຢຊູຖືກປະຕິເສດທີ່ນາຊາເຣັດ | | | 4:16–30 | | |

| ເຫດການ | ມັດທາຍ | ມາຣະໂກ | ລູກາ | ໂຢຮັນ | ການເປີດເຜີຍຍຸກສຸດທ້າຍ |
|---|---|---|---|---|---|
| ນັກປະມົງໄດ້ຖືກເອີ້ນໃຫ້ເປັນຜູ້ຫາຄົນ | 4:18–22 | 1:16–20 | | | |
| ການມະຫັດສະຈັນຂອງມອງທີ່ເຕັມໄປດ້ວຍປາ | | | 5:1–11 | | |
| ສິບສອງຄົນໄດ້ຖືກເອີ້ນ ແລະ ແຕ່ງຕັ້ງໃຫ້ເປັນອັກຄະສາວົກ | 10:1–4 | 3:13–19 | 6:12–16 | | 1 ນຟ 13:24–26, 39–41; ຄພ 95:4 |
| ເທດສະໜາຢູ່ໂນນພູ | 5–7 | | 6:17–49 | | 3 ນຟ 12–14 |
| ຄຳອະທິຖານຂອງພຣະຜູ້ເປັນເຈົ້າ | 6:5–15 | | 11:1–4 | | 3 ນຟ 13:5–15 |
| ການນຳລູກຂອງແມ່ໝ້າຍຄືນມາຈາກຄວາມຕາຍ | | | 7:11–15 | | |
| ພຣະເຢຊູໄດ້ຮັບການຫົດສົງໂດຍຜູ້ຍິງຄົນໜຶ່ງ | | | 7:36–50 | | |

ຄຳອຸປະມາຂອງພຣະເຢຊູເປັນເລື່ອງສັ້ນໆ ທີ່ປຽບທຽບວັດຖຸ ຫລື ເຫດການທຳມະດາ ໃສ່ກັບຄວາມຈິງ. ພຣະເຢຊູມັກໃຊ້ມັນເພື່ອສອນຄວາມຈິງທາງວິນຍານ.

| | | | | | |
|---|---|---|---|---|---|
| ຜູ້ຫວ່ານ: | 13:3–9, 18–23 | 4:3–9, 14–20 | 8:4–8, 11–15 | | |
| ເຂົ້ານົກ: | 13:24–30, 36–43 | | | | ຄພ 86:1–7 |
| ເມັດຜັກກາດ: | 13:31–32 | 4:30–32 | 13:18–19 | | |
| ເຊື້ອແປ້ງ: | 13:33 | | 13:20–21 | | |
| ຊັບທີ່ເຊື່ອງໄວ້ໃນທົ່ງ: | 13:44 | | | | |
| ໄຂ່ມຸກອັນລ້ຳຄ່າ: | 13:45–46 | | | | |
| ມອງຂອງຊາວປະມົງ: | 13:47–50 | | | | |
| ເຈົ້າຂອງເຮືອນ: | 13:51–52 | | | | |
| ຄົນຮັບໃຊ້ທີ່ບໍ່ມີຄວາມເມດຕາ: | 18:23–35 | | | | |
| ຜູ້ລ້ຽງທີ່ດີ: | | | | 10:1–21 | 3 ນຟ 15:17–24 |
| ໄທຊາມາເຣຍຜູ້ໃຈດີ: | | | 10:25–37 | | |
| ຄວາມຖ່ອມຕົວ, ງານລ້ຽງການສົມຣົດ: | | | 14:7–11 | | |
| ເຂົ້າແລງຄາບສຸດທ້າຍທີ່ສຳຄັນ: | | | 14:12–24 | | |

| ເຫດການ | ມັດທາຍ | ມາຣະໂກ | ລູກາ | ໂຢຮັນ | ການເປີດເຜີຍຍຸກສຸດທ້າຍ |
|---|---|---|---|---|---|
| ແກະທີ່ເສຍ: | ເບິ່ງ 18:12–14 ນຳອີກ | | 15:1–7 | | |
| ເງິນທີ່ເສຍ: | | | 15:8–10 | | |
| ລູກຊາຍທີ່ເສຍ: | | | 15:11–32 | | |
| ຜູ້ຈັດການທີ່ບໍ່ທ່ຽງທຳ: | | | 16:1–13 | | |
| ລາຊາໂຣ ແລະ ເສດຖີ: | | | 16:14–15, 19–31 | | |
| ຜູ້ຕັດສິນທີ່ບໍ່ທ່ຽງທຳ: | | | 18:1–8 | | |
| ຄົນງານໃນສວນອະງຸ່ນ: | 20:1–16 | ເບິ່ງ 10:31 ນຳອີກ | | | |
| ເງິນຫລຽນ: | | | 19:11–27 | | |
| ລູກຊາຍສອງຄົນ: | 21:28–32 | | | | |
| ຄົນເຊົ່າສວນທີ່ຊົ່ວ: | 21:33–46 | 12:1–12 | 20:9–19 | | |
| ງານສົມຣົດຂອງລູກຊາຍຂອງກະສັດ: | 22:1–14 | | ປຽບທຽບໃສ່ກັບ 14:7–24 | | |
| ຍິງສາວບໍລິສຸດສິບຄົນ: | 25:1–13 | | ເບິ່ງ 12:35–36 ນຳອີກ | | ຄພ 45:56–59 |
| ຕະລັນຕົນ: | 25:14–30 | | | | |
| ຝູງແກະ, ຝູງແບ້: | 25:31–46 | | | | |
| ການຫ້າມລົມພະຍຸ | 8:23–27 | 4:35–41 | 8:22–25 | | |
| ການຂັບໄລ່ຜີມານຮ້າຍເຂົ້າໄປສິງໃນຝູງໝູ | 8:28–34 | 5:1–20 | 8:26–29 | | |
| ການນຳລູກສາວຂອງຢາອີໂຣຄືນມາມີຊີວິດອີກ | 9:18–20, 23–26 | 5:21–24, 35–43 | 8:41–42, 49–56 | | |
| ການປິ່ນປົວຜູ້ຍິງທີ່ເປັນພະຍາດເລືອດຕົກ | 9:20–22 | 5:25–34 | 8:43–48 | | |
| ໜ້າທີ່ມອບໝາຍໃຫ້ແກ່ອັກຄະສາວົກສິບສອງຄົນ | 10:5–42 | 6:7–13 | 9:1–6 | | ຄພ 18 |
| ການລ້ຽງຫ້າພັນຄົນ | 14:16–21 | 6:33–44 | 9:11–17 | 6:5–14 | |
| ພຣະເຢຊູຍ່າງເທິງໜ້ານ້ຳ | 14:22–33 | 6:45–52 | | 6:15–21 | |
| ຄຳເທດສະໜາເລື່ອງອາຫານທິບແຫ່ງຊີວິດ | | | | 6:22–71 | |

| ເຫດການ | ມັດທາຍ | ມາຣະໂກ | ລູກາ | ໂຢຮັນ | ການເປີດເຜີຍຍຸກສຸດທ້າຍ |
|---|---|---|---|---|---|
| ປະຈັກພະຍານຂອງເປໂຕເຖິງພຣະຄຣິດ | 16:13–16 | 8:27–29 | 9:18–21 | | |
| ຂໍກະແຈແຫ່ງອານາຈັກສະຫວັນທີ່ຖືກສັນຍາວ່າຈະມອບໃຫ້ເປໂຕ | 16:19 | | | | |
| ການປ່ຽນສະພາບ; ຂໍກະແຈແຫ່ງຖານະປະໂລຫິດໄດ້ຖືກມອບໃຫ້ | 17:1–13 | 9:2–13 | 9:28–36 | | ຄພ 63:20–21; 110:11–13 |
| ສາວົກເຈັດສິບໄດ້ຖືກແຕ່ງຕັ້ງ ແລະ ຖືກສົ່ງອອກໄປ | | | 10:1–12 | | ຄພ 107:25, 34, 93–97; 124:138–140 |
| ການປິ່ນປົວຊາຍທີ່ຕາບອດໃນວັນຊະບາໂຕ | | | | 9 | |
| ລາຊາໂຣໄດ້ຖືກໂຜດໃຫ້ຄືນມີຊີວິດ | | | | 11:1–53 | |
| ການປິ່ນປົວຄົນຂີ້ທູດສິບຄົນ | | | 17:11–19 | | |
| ການໃຫ້ພອນແກ່ເດັກນ້ອຍ | 19:13–15 | 10:13–16 | 18:15–17 | | |
| ນາງມາຣີໄດ້ຫົດສົງພຣະບາດຂອງພຣະຄຣິດ | 26:6–13 | 14:3–9 | | 12:2–8 | |
| ການເຂົ້າໄປເຢຣູຊາເລັມຢ່າງຜູ້ມີໄຊ | 21:6–11 | 11:7–11 | 19:35–38 | 12:12–18 | |
| ຄົນຊື້ຂາຍຖືກຂັບໄລ່ອອກຈາກພຣະວິຫານ | 21:12–16 | 11:15–19 | 19:45–48 | | |
| ເງິນຂອງຍິງໝ້າຍ | | 12:41–44 | 21:1–4 | | |
| ຄວາມພິນາດຂອງເຢຣູຊາເລັມ ແລະ ເຄື່ອງໝາຍຂອງການສະເດັດມາຄັ້ງທີສອງ | 24 | 13 | 21:5–38 | | ຄພ 45:16–60; ຈສ—ມ 1 |
| ງານປັດສະຄາເທື່ອສຸດທ້າຍຂອງພຣະເຢຊູ; ການຈັດຕັ້ງສິນລະລຶກ; ຄຳແນະນຳແກ່ອັກຄະສາວົກສິບສອງ; ການລ້າງຕີນຂອງສານຸສິດ | 26:14–32 | 14:10–27 | 22:1–20 | 13–17 | |
| ພຣະເຢຊູເປັນຕົ້ນອະງຸ່ນ | | | | 15:1–8 | |

| ເຫດການ | ມັດທາຍ | ມາຣະໂກ | ລູກາ | ໂຢຮັນ | ການເປີດເຜີຍຍຸກສຸດທ້າຍ |
|---|---|---|---|---|---|
| ການຮັບທຸກທໍລະມານຂອງພຣະເຢຊູໃນສວນເຄັດເຊມາເນ | 26:36–46 | 14:32–42 | 22:40–46 | 18:1 | 2 ນຟ 9:21–22; ມຊຢ 3:5–12; ຄພ 19:1–24 |
| ການທໍລະຍົດຂອງຢູດາ | 26:47–50 | 14:43–46 | 22:47–48 | 18:2–3 | |
| ການຕໍ່ສູ້ຄະດີຢູ່ຕໍ່ໜ້າກາຢະຟາ | 26:57 | 14:53 | 22:54, 66–71 | 18:24, 28 | |
| ການຕໍ່ສູ້ຄະດີຢູ່ຕໍ່ໜ້າປີລາດ | 27:2, 11–14 | 15:1–5 | 23:1–6 | 18:28–38 | |
| ການຕໍ່ສູ້ຄະດີຢູ່ຕໍ່ໜ້າເຮໂຣດ | | | 23:7–12 | | |
| ພຣະເຢຊູໄດ້ຖືກຂ້ຽນຕີ ແລະ ຖືກເຍາະເຍີ້ຍ | 27:27–31 | 15:15–20 | | 19:1–12 | |
| ການຄຶງ | 27:35–44 | 15:24–33 | 23:32–43 | 19:18–22 | ຮລມ 14:20–27; 3 ນຟ 8:5–22; 10:9 |
| ການຟື້ນຄືນພຣະຊົນ | 28:2–8 | 16:5–8 | 24:4–8 | | |
| ການປະກົດຕົວຂອງພຣະເຢຊູຕໍ່ສານຸສິດ | | 16:14 | 24:13–32, 36–51 | 20:19–23 | |
| ການປະກົດຕົວຂອງພຣະເຢຊູຕໍ່ໂທມາ | | | | 20:24–29 | |
| ການສະເດັດຂຶ້ນສະຫວັນ | | 16:19–20 | 24:50–53 | | |

# ການຄັດເລືອກຈາກການ
# ແປພຣະຄຣິສຕະທຳຄຳພີຂອງໂຈເຊັບ ສະມິດ

ຕໍ່ໄປນີ້ແມ່ນພາກສ່ວນຕ່າງໆ ທີ່ຄັດເລືອກມາຈາກການແປພຣະຄຣິສຕະທຳຄຳພີ ສະບັບກະສັດເຈມສ໌ ຂອງໂຈເຊັບ ສະມິດ (ປຈສ). ພຣະຜູ້ເປັນເຈົ້າໄດ້ດົນໃຈສາດສະດາ ໂຈເຊັບ ສະມິດ ໃຫ້ຟື້ນຟູຄວາມຈິງ ໃຫ້ແກ່ຂໍ້ຄວາມໃນພຣະຄຣິສຕະທຳຄຳພີ ສະບັບກະສັດເຈມສ໌ ທີ່ສູນຫາຍໄປ ຫລື ຖືກປ່ຽນແປງໄປ ຕັ້ງແຕ່ມີການຂຽນຖ້ອຍຄຳດັ້ງເດີມໄວ້. ຄວາມຈິງເຫລົ່ານີ້ທີ່ໄດ້ຖືກຟື້ນຟູຄືນມາໃໝ່ໄດ້ໃຫ້ຄວາມແຈ່ມແຈ້ງແກ່ຄຳສອນ ແລະ ໄດ້ເພີ່ມຄວາມເຂົ້າໃຈແກ່ພຣະຄຳພີ.

ເພາະພຣະຜູ້ເປັນເຈົ້າໄດ້ເປີດເຜີຍຄວາມຈິງບາງຢ່າງຕໍ່ໂຈເຊັບ ທີ່ຜູ້ຂຽນດັ້ງເດີມເຄີຍບັນທຶກໄວ້, ການແປຂອງໂຈເຊັບ ສະມິດ ຈຶ່ງບໍ່ເໝືອນການແປພຣະຄຣິສຕະທຳຄຳພີອື່ນໃດໃນໂລກ. ໃນຄວາມໝາຍນີ້, ຄຳວ່າ *ການແປ* ໄດ້ຖືກໃຊ້ໃນວິທີທີ່ກວ້າງຂວາງກວ່າ ແລະ ແຕກຕ່າງຈາກປົກກະຕິກວ່າ, ເພາະການແປຂອງໂຈເຊັບເປັນການເປີດເຜີຍຫລາຍກວ່າການແປຕາມຄວາມໝາຍຂອງຄຳສັບ ຈາກພາສາໜຶ່ງ ເປັນອີກພາສາໜຶ່ງ.

ການແປພຣະຄຣິສຕະທຳຄຳພີ ສະບັບກະສັດເຈມສ໌ ຂອງໂຈເຊັບ ສະມິດ ມີສ່ວນກ່ຽວຂ້ອງ ຫລື ຖືກກ່າວເຖິງຢູ່ໃນຫລາຍໆພາກ ຂອງຄຳສອນ ແລະ ພັນທະສັນຍາ (ເບິ່ງ ພາກທີ 37, 45, 73, 76, 77, 86, 91, ແລະ 132). ພ້ອມນີ້, ໜັງສືໂມເຊ ແລະ ໂຈເຊັບ ສະມິດ—ມັດທາຍ ກໍຖືກຄັດລອກເອົາມາຈາກການແປຂອງໂຈເຊັບ ສະມິດ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ການແປຂອງໂຈເຊັບ ສະມິດ, ໃຫ້ເບິ່ງ "ການແປຂອງໂຈເຊັບ ສະມິດ (ປຈສ)" ໃນຄູ່ມືພຣະຄຳພີ.

ຂໍ້ຄວາມດັ່ງຕໍ່ໄປນີ້ຄືຕົວຢ່າງທີ່ເລືອກເອົາມາຈາກ ການແປຂອງໂຈເຊັບ ສະມິດ:

ຂໍ້ອ້າງອີງນີ້ ທີ່ເປັນຕົວອັກສອນໜາ ເປັນຂໍ້ຄວາມໃນການແປຂອງໂຈເຊັບ ສະມິດ ຂອງພຣະຄຣິສຕະທຳຄຳພີຂອງກະສັດເຈມສ໌. ເພາະການແປຂອງເພິ່ນໄດ້ນຳຖ້ອຍຄຳກັບຄືນມາສູ່ເນື້ອຄວາມໃນພຣະຄຣິສຕະທຳຄຳພີ, ເລກໝາຍຂໍ້ອາດແຕກຕ່າງຈາກສະບັບທີ່ທ່ານໃຊ້ຢູ່.

**ປຈສ, ມັດທາຍ 4:1, 5–6, 8–9.** ປຽບທຽບໃສ່ກັບ ມັດທາຍ 4:1, 5–6, 8–9; ມີການປ່ຽນແປງທີ່ຄ້າຍຄືກັນ ໃນ ລູກາ 4:2, 5–11

ໃນວົງເລັບນີ້ຄືຂໍ້ອ້າງອີງ ໃນພຣະຄຣິສຕະທຳຄຳພີຂອງທ່ານ ຊຶ່ງທ່ານຄວນປຽບທຽບມັນໃສ່ກັບການແປຂອງໂຈເຊັບ ສະມິດ.

ພຣະເຢຊູຖືກນຳພາໂດຍພຣະວິນຍານ, ບໍ່ແມ່ນໂດຍຊາຕານ.

ຂໍ້ຄວາມນີ້ອະທິບາຍເຖິງ ຄຳສອນທີ່ໂຈເຊັບ ສະມິດ ໄດ້ຊີ້ແຈງ ດ້ວຍການແປຂອງເພິ່ນ.

1 ຈາກນັ້ນ ພຣະວິນຍານໄດ້ນຳ*ພຣະເຢຊູໄປ*, ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ, ເພື່ອໄປຢູ່ກັບ*ພຣະເຈົ້າ*.

5 ຈາກນັ້ນ *ພຣະເຢຊູໄດ້ຖືກນຳໄປ*ຍັງນະຄອນສັກສິດ, ແລະ *ພຣະວິນຍານ*ໄດ້ໃຫ້ພຣະອົງຢືນຢູ່ເທິງຍອດພຣະວິຫານ.

6 *ຈາກນັ້ນມານໄດ້ມາຫາພຣະອົງ ແລະ ເວົ້າວ່າ*, ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ, ຈົ່ງໂດດລົງໄປ, ເພາະມີຄຳຂຽນໄວ້ວ່າ ພຣະອົງຈະສັ່ງເຫລົ່າທູດເຖິງເລື່ອງທ່ານ, ແລະ ພວກເພິ່ນຈະໃຊ້ມືຂອງພວກເພິ່ນອູ້ມທ່ານໄວ້, ເຖິງແມ່ນແຕ່ຕີນຂອງທ່ານ ກໍຈະບໍ່ໄດ້ຖືກກ້ອນຫີນ.

ນີ້ຄືເນື້ອຫາຕາມທີ່ໂຈເຊັບ ສະມິດ ໄດ້ແປມັນ. (ໂຕເນີ້ງໄດ້ຖືກຕື່ມໃສ່ ເພື່ອສະແດງໃຫ້ເຫັນຂໍ້ຄວາມທີ່ແຕກຕ່າງ ຈາກສະບັບກະສັດເຈມສ໌.)

**ປຈສ, ປະຖົມມະການ 1:1–8:18.**
ປຽບທຽບໃສ່ກັບ ປະຖົມມະການ 1:1–6:13

ເນື້ອຫານີ້ຂອງພຣະຄຣິສຕະທຳຄຳພີ ໄດ້ຖືກນຳກັບຄືນມາໂດຍ ໂຈເຊັບ ສະມິດ ແລະ ໄດ້ຖືກຈັດພິມໄວ້ໃນ ໄຂ່ມຸກອັນລ້ຳຄ່າ ເປັນພາກສ່ວນໜຶ່ງທີ່ນອກເໜືອຈາກ ໜັງສືໂມເຊ

**ປຈສ, ປະຖົມມະການ 9:4–6.**
ປຽບທຽບໃສ່ກັບ ປະຖົມມະການ 8:20–22

ຫລັງຈາກນ້ຳຖ້ວມ, ໂນອາໄດ້ທູນຂໍພຣະຜູ້ເປັນເຈົ້າບໍ່ໃຫ້ສາບແຊ່ງແຜ່ນດິນໂລກອີກ.

4 ແລະ ໂນອາໄດ້ສ້າງແທ່ນບູຊາແທ່ນໜຶ່ງ
ຖວາຍແກ່ພຣະຜູ້ເປັນເຈົ້າ, ແລະ ໄດ້ເອົາສັດ
ແລະ ນົກ ທີ່ບໍ່ມີມົນທິນ ແນວລະໂຕ, ແລະ
ໄດ້ເຜົາຖວາຍເທິງແທ່ນບູຊາ; *ແລະ ໄດ້ຂອບ
ພຣະໄທພຣະຜູ້ເປັນເຈົ້າ, ແລະ ເພິ່ນມີຄວາມ
ປິຕິຍິນດີຢູ່ໃນໃຈ.*
5 *ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ໂນອາ, ແລະ ພຣະອົງໄດ້ອວຍພອນໂນອາ.
ແລະ ໂນອາ*ໄດ້ກິ່ນຫອມຫວນ, ແລະ *ເພິ່ນ*
ໄດ້ກ່າວຢູ່ໃນໃຈ;
6 *ຂ້າພະເຈົ້າຈະອ້ອນວອນໃນພຣະນາມ
ຂອງພຣະຜູ້ເປັນເຈົ້າ, ເພື່ອວ່າພຣະອົງ* ຈະ
ບໍ່ສາບແຊ່ງແຜ່ນດິນໂລກອີກຕໍ່ໄປ ເພື່ອ
ເຫັນແກ່ມະນຸດ, ເພາະການມະໂນພາບ
ຢູ່ໃນໃຈຂອງມະນຸດ ເປັນຄວາມຊົ່ວຮ້າຍ
ນັບແຕ່ເວລາເຂົາຍັງນ້ອຍ; *ແລະ ວ່າພຣະ
ອົງຈະບໍ່* ທຳລາຍທຸກສິ່ງທີ່ມີຊີວິດອີກ, ດັ່ງ
ທີ່ *ພຣະອົງ* ໄດ້ກະທຳ, ຕາບໃດທີ່ແຜ່ນດິນ
ໂລກຍັງຄົງດຳລົງຢູ່;

**ປຈສ, ປະຖົມມະການ 9:10–15.** ປຽບທຽບໃສ່ກັບ ປະຖົມມະການ 9:4–9

ມະນຸດມີຄວາມຮັບຜິດຊອບຕໍ່ການຫລັ່ງເລືອດຂອງສັດສາວາສິ່ງ ແລະ ມະນຸດ. ພຣະເຈົ້າໄດ້ສະຖາປະນາພັນທະສັນຍາກັບໂນອາ ແລະ ລູກໆຂອງເພິ່ນ ອັນດຽວກັນກັບທີ່ພຣະອົງໄດ້ເຮັດໄວ້ກັບເອນົກ.

10 ແຕ່ *ເລືອດ ຂອງ ທຸກເນື້ອ ໜັງ ຊຶ່ງ
ເຮົາ ໄດ້ມອບ ໃຫ້ ແກ່ພວກ ເຈົ້າ ເພື່ອ ເປັນ
ອາຫານ, ຈະຕ້ອງຫລັ່ງລົງເທິງດິນຈາກສັດ
ທີ່ຖືກຂ້າ, ແລະ* ພວກເຈົ້າບໍ່ຄວນກິນ*ເລືອດ
ຂອງມັນ.*
11 ແລະ ແນ່ ນອນ, *ຈະ ບໍ່ ຕ້ອງ ຫລັ່ງ
ເລືອດ, ນອກຈາກຈະເປັນເພື່ອອາຫານ,
ເພື່ອ ຄ້ຳ ຈູນຊີວິດຂອງພວກ ເຈົ້າ ເທົ່ານັ້ນ;
ແລະ ເລືອດ*ຂອງສັດທຸກໂຕ ເຮົາຈະຮຽກ
ຮ້ອງ*ຈາກມືຂອງພວກເຈົ້າ.*
12 ແລະ ຄົນໃດກໍຕາມທີ່ຫລັ່ງເລືອດຂອງ
ມະນຸດ, ມະນຸດກໍຈະຫລັ່ງເລືອດຄົນນັ້ນຄື
ກັນ; *ເພາະມະນຸດບໍ່ຄວນຫລັ່ງເລືອດຂອງ
ມະນຸດ.*
13 *ເພາະພຣະບັນຍັດຂໍ້ໜຶ່ງເຮົາໃຫ້ໄວ້,*
ວ່າອ້າຍນ້ອງຂອງມະນຸດຄົນໜຶ່ງ*ຈະປົກປັກ
ຮັກສາຊີວິດ*ຂອງມະນຸດ, ເພາະ*ໃນຮູບລັກ
ສະນະຂອງເຮົາເອງ ທີ່ເຮົາໄດ້*ສ້າງມະນຸດ
ຂຶ້ນ.
14 *ແລະ ພຣະບັນຍັດຂໍ້ໜຶ່ງເຮົາ ໃຫ້ໄວ້
ແກ່ເຈົ້າ,* ຈົ່ງມີລູກເຕົ້າໃຫ້ມາກຫລາຍ; ໃຫ້
ອອກ ແມ່ແຜ່ລູກ ຈົນເຕັມແຜ່ນ ດິນໂລກ,
ແລະ ແຜ່ຜາຍຂະຫຍາຍພັນໃນນັ້ນ.
15 ແລະ ພຣະເຈົ້າໄດ້ກ່າວກັບໂນອາ,
ແລະ ກັບພວກລູກຊາຍຂອງເພິ່ນ, ກ່າວວ່າ,
ແລະ ເຮົາ, ຈົ່ງເບິ່ງ, ເຮົາ ຈະ ສະຖາປະນາ
ພັນທະສັນຍາຂອງເຮົາກັບພວກເຈົ້າ, *ຊຶ່ງ
ເຮົາໄດ້ເຮັດໄວ້ກັບເອນົກ ບັນພະບຸລຸດຂອງ
ພວກເຈົ້າ, ກ່ຽວກັບ*ລູກຫລານຂອງພວກ
ເຈົ້າ ຕໍ່ຈາກພວກເຈົ້າ.

**ປຈສ, ປະຖົມມະການ 9:21–25.**

ປຽບທຽບໃສ່ກັບ ປະຖົມມະການ 9:16–17

ພຣະເຈົ້າຕັ້ງຮຸ້ງກິນນ້ຳໄວ້ໃນທ້ອງຟ້າ ເພື່ອເປັນສິ່ງເຕືອນເຖິງພັນທະສັນຍາຂອງພຣະອົງຕໍ່ເອນົກ ແລະ ຕໍ່ໂນອາ. ໃນຍຸກສຸດທ້າຍ ການຊຸມນຸມໃຫຍ່ຂອງສາດສະໜາຈັກຂອງພຣະບຸດຫົວປີ ຈະຮ່ວມຄົນທີ່ຊອບທຳຢູ່ເທິງແຜ່ນດິນໂລກເຂົ້າກັນ.

21 ແລະ ຮຸ້ງຈະຢູ່ໃນເມກ; ແລະ ເຮົາຈະ
ຫລຽວເບິ່ງມັນ, ເພື່ອວ່າເຮົາຈະລະນຶກເຖິງ
ພັນທະສັນຍາອັນເປັນນິດ, *ຊຶ່ງເຮົາໄດ້ເຮັດ
ໄວ້ກັບເອນົກບັນພະບຸລຸດຂອງພວກເຈົ້າ;
ເພື່ອວ່າ ເມື່ອມະນຸດຮັກສາພຣະບັນຍັດ
ຂອງເຮົາທັງໝົດ, ຊີໂອນຈະຄືນມາຍັງແຜ່ນ
ດິນໂລກອີກ, ເມືອງຂອງເອນົກ ຊຶ່ງເຮົາໄດ້
ຮັບຂຶ້ນໄປໄວ້ກັບເຮົາ.*
22 *ແລະ ນີ້ຄືພັນທະສັນຍາອັນເປັນນິດ
ຂອງເຮົາ, ຄືເມື່ອລູກຫລານຂອງພວກເຈົ້າ
ຈະຮັບເອົາຄວາມຈິງ, ແລະ ແຫງນໜ້າເບິ່ງ,
ຈາກນັ້ນຊີໂອນຈະຫລຽວລົງມາ, ແລະ ຟ້າ
ສະຫວັນທັງປວງຈະສັ່ນສະເທືອນ ດ້ວຍ
ຄວາມຍິນດີ, ແລະ ແຜ່ນດິນໂລກຈະສັ່ນ
ດ້ວຍຄວາມຊື່ນຊົມ;*
23 *ແລະ ການຊຸມນຸມໃຫຍ່ຂອງສາດສະ
ໜາຈັກຂອງພຣະບຸດຫົວປີ ຈະສະເດັດລົງ
ມາຈາກສະຫວັນ, ແລະ ຄອບຄອງແຜ່ນ
ດິນໂລກ, ແລະ ຈະມີສະຖານທີ່ຢູ່ຈົນກວ່າທີ່
ສຸດຈະມາເຖິງ. ແລະ ນີ້ຄືພັນທະສັນຍາອັນ
ເປັນນິດຂອງເຮົາ, ຊຶ່ງເຮົາໄດ້ເຮັດໄວ້ກັບ
ເອນົກ ບັນພະບຸລຸດຂອງພວກເຈົ້າ.*
24 *ແລະ ຮຸ້ງຈະຢູ່ໃນເມກ, ແລະ ເຮົາຈະ
ສະຖາປະນາພັນທະສັນຍາຂອງເຮົາກັບ
ພວກເຈົ້າ, ຊຶ່ງເຮົາໄດ້ເຮັດໄວ້ລະຫວ່າງເຮົາ*
ແລະ *ພວກເຈົ້າ,* ເພາະມະນຸດທັງປວງທີ່ມີຊີ
ວິດໃນເນື້ອໜັງ ຈະໄດ້ຢູ່ເທິງແຜ່ນດິນໂລກ.
25 ແລະ ພຣະເຈົ້າໄດ້ກ່າວກັບໂນອາວ່າ,
ນີ້ຄືເຄື່ອງໝາຍຂອງພັນທະສັນຍາ ຊຶ່ງເຮົາ
ໄດ້ສະຖາປະນາລະຫວ່າງເຮົາ ແລະ *ເຈົ້າ;
ເພື່ອເນື້ອໜັງທັງປວງຈະໄດ້ຢູ່ເທິງແຜ່ນດິນ*
ໂລກ.

**ປຈສ, ປະຖົມມະການ 14:25–40.**

ປຽບທຽບໃສ່ກັບ ປະຖົມມະການ 14:18–20

ເມນຄີເສເດັກອວຍພອນອັບຣາມ. ການປະຕິບັດສາດສະໜາກິດທີ່ຍິ່ງໃຫຍ່ຂອງເມນຄີເສເດັກ ແລະ ອຳນາດ ແລະ ພອນຂອງຖານະປະໂລຫິດແຫ່ງເມນຄີເສເດັກ ໄດ້ຖືກບັນຍາຍໄວ້.

25 *ແລະ ເມນຄີເສເດັກໄດ້ເປັ່ງສຽງ ແລະ
ອວຍພອນອັບຣາມ.*
26 *ບັດນີ້ ເມນຄີເສເດັກເປັນຄົນມີສັດທາ,
ຜູ້ໄດ້ເຮັດຄວາມຊອບທຳ; ແລະ ເມື່ອຕອນ
ຍັງນ້ອຍ ເພິ່ນໄດ້ຢຳເກງພຣະເຈົ້າ, ແລະ
ໄດ້ປິດປາກສິງ, ແລະ ໄດ້ດັບຄວາມຮ້ອນ
ຂອງໄຟ.*
27 *ແລະ ດັ່ງນັ້ນ, ໂດຍທີ່ໄດ້ຮັບຄວາມ
ເຫັນຊອບຂອງພຣະເຈົ້າ, ເພິ່ນຈຶ່ງໄດ້ຖືກ
ແຕ່ງຕັ້ງເປັນມະຫາປະໂລຫິດ ຕາມລະບຽບ
ຂອງພັນທະສັນຍາ ຊຶ່ງພຣະເຈົ້າໄດ້ເຮັດໄວ້
ກັບເອນົກ,*
28 *ມັນເປັນໄປຕາມລະບຽບຂອງພຣະ
ບຸດຂອງພຣະເຈົ້າ; ຊຶ່ງລະບຽບໄດ້ເກີດຂຶ້ນ,
ບໍ່ແມ່ນໂດຍມະນຸດ, ຫລື ໂດຍຄວາມປະສົງ
ຂອງມະນຸດ; ບໍ່ແມ່ນໂດຍພໍ່ ຫລື ແມ່; ບໍ່
ແມ່ນໂດຍການເລີ່ມຕົ້ນຂອງວັນ ຫລື ໂດຍ
ການສິ້ນສຸດຂອງປີ; ແຕ່ໂດຍພຣະເຈົ້າ;*
29 *ແລະ ມັນໄດ້ຖືກມອບໃຫ້ມະນຸດ ໂດຍ
ການເອີ້ນດ້ວຍສຸລະສຽງຂອງພຣະອົງເອງ,
ຕາມພຣະປະສົງຂອງພຣະອົງເອງ, ແກ່ຄົນ
ຫລາຍຕໍ່ຫລາຍຄົນທີ່ເຊື່ອໃນພຣະນາມ
ຂອງພຣະອົງ.*
30 *ເພາະພຣະເຈົ້າໂດຍທີ່ໄດ້ປະຕິຍານ*

*ກັບ ເອນົກ ແລະ ກັບ ລູກ ຫລານ ຂອງ ເພິ່ນ ດ້ວຍຄຳສາບານດ້ວຍຕົວພຣະອົງເອງ; ວ່າ ທຸກຄົນທີ່ໄດ້ຮັບການ ແຕ່ງຕັ້ງຕາມລະບຽບ ແລະ ການເອີ້ນ ຈະມີອຳນາດ, ໂດຍສັດທາ, ເພື່ອທຳລາຍພູເຂົາ, ເພື່ອແຍກທະເລ, ເພື່ອ ເຮັດ ໃຫ້ນ້ຳແຫ້ງ, ເພື່ອປ່ຽນສາຍນ້ຳອອກ ຈາກເສັ້ນທາງເດີນຂອງມັນ;*

31 *ເພື່ອຕໍ່ຕ້ານບັນດາກອງທັບຂອງປະ ຊາຊາດ, ເພື່ອແຍກແຜ່ນດິນໂລກ, ເພື່ອ ຕັດສາຍຮັດທຸກເສັ້ນ, ເພື່ອຢືນໃນທີ່ປະທັບ ຂອງພຣະເຈົ້າ; ເພື່ອເຮັດທຸກສິ່ງທັງປວງ ຕາມພຣະປະສົງຂອງພຣະອົງ, ຕາມພຣະ ບັນຊາຂອງພຣະອົງ, ປາບເຂດປົກຄອງ ແລະ ອຳນາດທັງຫລາຍ; ແລະ ສິ່ງນີ້ໂດຍ ພຣະປະສົງຂອງພຣະເຈົ້າ ຊຶ່ງດຳລົງຢູ່ກ່ອນ ການວາງຮາກຖານຂອງໂລກ.*

32 *ແລະ ມະນຸດ ໂດຍທີ່ມີສັດທານີ້, ທີ່ ຂຶ້ນມາເຖິງລະບຽບນີ້ຂອງພຣະເຈົ້າ, ໄດ້ ຖືກປ່ຽນແປງສະພາບ ແລະ ຖືກພາຂຶ້ນສູ່ ສະຫວັນ.*

33 *ແລະ ບັດນີ້, ເມນຄີເສເດັກໄດ້ເປັນປະ ໂລຫິດຂອງລະບຽບນີ້; ສະນັ້ນ ເພິ່ນຈຶ່ງໄດ້ ຮັບສັນຕິສຸກ ໃນຊາເລັມ, ແລະ ຖືກເອີ້ນວ່າ ເຈົ້າສັນຕິລາດ.*

34 *ແລະ ຜູ້ຄົນຂອງເພິ່ນໄດ້ເຮັດຄວາມ ຊອບທຳ, ແລະ ໄດ້ຮັບສະຫວັນ, ແລະ ໄດ້ ສະແຫວງຫາເມືອງຂອງເອນົກ ຊຶ່ງພຣະ ເຈົ້າໄດ້ຮັບເອົາໄປກ່ອນໜ້ານັ້ນ, ໄດ້ແຍກ ມັນອອກຈາກແຜ່ນດິນໂລກ, ໄດ້ຮັກສາມັນ ໄວ້ສຳລັບຍຸກສຸດທ້າຍ, ຫລື ຄາວສິ້ນສຸດ ໂລກ;*

35 *ແລະ ໄດ້ກ່າວ, ແລະ ໄດ້ປະຕິຍານ ດ້ວຍຄຳສາບານ, ວ່າສະຫວັນ ແລະ ແຜ່ນ ດິນໂລກ ຈະບໍ່ເຂົ້າມາຫາກັນອີກ; ແລະ ບັນ ດາບຸດຂອງພຣະເຈົ້າ ຈະຖືກທົດສອບດັ່ງ ນັ້ນດ້ວຍໄຟ.*

36 *ແລະ ເມນຄີເສເດັກຄົນນີ້, ໂດຍທີ່ໄດ້ ສະຖາປະນາຄວາມຊອບທຳດັ່ງນີ້, ຈຶ່ງໄດ້ ຖືກເອີ້ນວ່າ ກະສັດແຫ່ງສະຫວັນ ໂດຍຜູ້ ຄົນຂອງເພິ່ນ, ຫລື ອີກຄຳໜຶ່ງ, ກະສັດແຫ່ງ ສັນຕິສຸກ.*

37 *ແລະ ເພິ່ນ ໄດ້ ເປັ່ງ ສຽງ ຂອງ ເພິ່ນ; ແລະ ເພິ່ນ ໄດ້ອວຍພອນອັບຣາມ, ໂດຍ ທີ່ເປັນມະຫາປະໂລຫິດ, ແລະ ຜູ້ດູແລຄັງ ຂອງພຣະເຈົ້າ;*

38 *ເພິ່ນປັນຜູ້ທີ່ພຣະເຈົ້າໄດ້ກຳນົດໄວ້ ເພື່ອໃຫ້ຮັບເອົາໜຶ່ງສ່ວນສິບ ສຳລັບຄົນ ຍາກຈົນ.*

39 *ດັ່ງນັ້ນ, ອັບຣາມຈຶ່ງໄດ້ຈ່າຍໜຶ່ງສ່ວນ ສິບຂອງທຸກສິ່ງທີ່ເພິ່ນມີໃຫ້ເພິ່ນ, ຈາກຊັບ ສົມບັດທັງໝົດທີ່ເພິ່ນຄອບຄອງ, ຊຶ່ງພຣະ ເຈົ້າໄດ້ປະທານໃຫ້ເພິ່ນ ຫລາຍກວ່າທີ່ເພິ່ນ ຕ້ອງການ.*

40 *ແລະ ເຫດການ ໄດ້ເກີດຂຶ້ນ, ຄືພຣະ ເຈົ້າ ໄດ້ ອວຍພອນອັບຣາມ, ແລະ ໄດ້ ປະທານຄວາມຮັ່ງມີໃຫ້ເພິ່ນ, ແລະ ກຽດຕິ ຍົດ, ແລະ ທີ່ດິນ ເພື່ອເປັນຊັບສົມບັດອັນ ເປັນນິດ; ຕາມພັນທະສັນຍາທີ່ເພິ່ນໄດ້ເຮັດ ໄວ້, ແລະ ຕາມພອນທີ່ເມນຄີເສເດັກໄດ້ ມອບໃຫ້ເພິ່ນ.*

**ປຈສ, ປະຖົມມະການ 15:9–12.**

ປຽບທຽບໃສ່ກັບ ປະຖົມມະການ 15:1–6

ອັບຣາຮາມຮຽນຮູ້ກ່ຽວກັບການຟື້ນຄືນພຣະຊົນ ແລະ ເຫັນການປະຕິບັດສາດສະໜາກິດໃນຊ່ວງ ມະຕະຂອງພຣະເຢຊູ ໃນພາບນິມິດ.

9 *ແລະ ອັບຣາມໄດ້ກ່າວວ່າ, ອົງພຣະຜູ້ ເປັນເຈົ້າ, ພຣະອົງຈະປະທານແຜ່ນດິນນີ້ ໃຫ້ຂ້ານ້ອຍ ເພື່ອເປັນມູນມໍລະດົກອັນເປັນ ນິດໄດ້ແນວໃດ?*

10 *ແລະ ພຣະຜູ້ເປັນເຈົ້າ ໄດ້ກ່າວ ວ່າ,*

ເຖິງແມ່ນເຈົ້າຕາຍໄປ, ແຕ່ເຮົາກໍສາມາດ
ປະທານມັນໃຫ້ແກ່ເຈົ້າ ບໍ່ແມ່ນບໍ?
11 ແລະ ຖ້າເຈົ້າ ຈະ ຕາຍ, ແຕ່ເຈົ້າຈະ
ຄອບຄອງມັນ, ເພາະວັນເວລາຈະມາເຖິງ,
ເມື່ອບຸດມະນຸດຈະມີຊີວິດ; ແຕ່ພຣະອົງຈະ
ມີຊີວິດໄດ້ແນວໃດ ຖ້າຫາກພຣະອົງບໍ່ໄດ້
ສິ້ນພຣະຊົນ? ພຣະອົງຕ້ອງຄືນຊີບເສຍ
ກ່ອນ.
12 ແລະ ເຫດການ ໄດ້ ບັງ ເກີດ ຂຶ້ນ, ຄື
ອັບຣາມ ໄດ້ຫລຽວອອກໄປ ແລະ ໄດ້ເຫັນ
ວັນ ເວລາຂອງບຸດ ມະນຸດ, ແລະ ຍິນ ດີ,
ແລະ ຈິດວິນຍານຂອງເພິ່ນສະຫງົບງຽບ,
ແລະ ເພິ່ນເຊື່ອໃນພຣະຜູ້ເປັນເຈົ້າ; ແລະ
ພຣະຜູ້ເປັນເຈົ້າໄດ້ຮັບວ່າເພິ່ນເປັນຄົນ
ຊອບທຳ.

**ປຈສ, ປະຖົມມະການ 17:3–12.**

ປຽບທຽບໃສ່ກັບ ປະຖົມມະການ 17:3–12

ຜູ້ຄົນບໍ່ສາມາດຮັກສາພິທີການຂອງພຣະກິດຕິຄຸນ, ລວມທັງການບັບຕິສະມາ. ພຣະເຈົ້າອະທິບາຍເລື່ອງພັນທະສັນຍາຂອງພິທີຕັດ ແລະ ອາຍຸທີ່ຮູ້ຈັກຮັບຜິດຊອບຂອງເດັກ ແກ່ອັບຣາຮາມ.

3 ແລະ ເຫດການໄດ້ບັງເກີດຂຶ້ນ, ຄືອັບຣາມ
ໄດ້ກົ້ມຂາບລົງຈົນເຖິງພື້ນດິນ, ແລະ ໄດ້ເອີ້ນ
ຫາພຣະນາມຂອງພຣະຜູ້ເປັນເຈົ້າ.
4 ແລະ ພຣະເຈົ້າໄດ້ກ່າວກັບເພິ່ນວ່າ, ຜູ້
ຄົນຂອງເຮົາໄດ້ຫັນໜີຈາກກົດເກນຂອງ
ເຮົາ, ແລະ ບໍ່ໄດ້ຮັກສາພິທີການຂອງເຮົາ,
ຊຶ່ງເຮົາໄດ້ປະທານໃຫ້ບັນພະບຸລຸດຂອງ
ພວກເຂົາ;
5 ແລະ ພວກເຂົາບໍ່ໄດ້ຮັກສາການເຈີມ
ຂອງເຮົາ, ແລະ ການຝັງ, ຫລື ການບັບຕິ
ສະມາ ຊຶ່ງໃນເລື່ອງນີ້ ເຮົາໄດ້ບັນຊາພວກ
ເຂົາ;
6 ແຕ່ໄດ້ຫັນໜີຈາກພຣະບັນຍັດ, ແລະ
ດຳເນີນການດ້ວຍຕົນເອງ ໂດຍການຊຳລະ
ລ້າງເດັກນ້ອຍໆ, ແລະ ການພົມເລືອດ;
7 ແລະ ໄດ້ກ່າວວ່າ ເລືອດຂອງອາເບັນ
ທີ່ຊອບທຳ ໄດ້ຫລັ່ງເພື່ອບາບ; ແລະ ບໍ່ຮູ້ວ່າ
ພວກເຂົາມີຄວາມຮັບຜິດຊອບຕໍ່ເຮົາແນວ
ໃດ.
8 ແຕ່ ສຳ ລັບເຈົ້າ, ຈົ່ງ ເບິ່ງ, ເຮົາ ຈະ
ເຮັດພັນທະສັນຍາກັບເຈົ້າ, ແລະ ວ່າເຈົ້າ
ຈະ ເປັນບັນ ພະບຸລຸດຂອງຊົນຊາດທັງ
ຫລາຍ.
9 ແລະ ເຮົາເຮັດພັນທະສັນຍານີ້, ວ່າທຸກ
ປະຊາຊາດຈະຮູ້ຈັກລູກຫລານຂອງເຈົ້າ. ຊື່
ເຈົ້າຈະບໍ່ແມ່ນອັບຣາມອີກຕໍ່ໄປ, ແຕ່ເຈົ້າ
ຈະມີຊື່ໃໝ່ວ່າ ອັບຣາຮາມ; ເພາະເຮົາໄດ້
ໃຫ້ເຈົ້າເປັນບັນພະບຸລຸດຂອງຫລາຍໆຊົນ
ຊາດ.
10 ແລະ ເຮົາຈະໃຫ້ເຈົ້າມີເຊື້ອສາຍຢ່າງ
ຫລວງຫລາຍ ແລະ ບາງຄົນໃນເຊື້ອສາຍ
ນັ້ນ, ແລະ ຈາກລູກຫລານຂອງເຈົ້າ ຈະ
ເປັນເຖິງກະສັດ.
11 ແລະ ເຮົາ ຈະ ສະຖາ ປະນາພັນທະ
ສັນຍາຂອງພິທີຕັດໄວ້ກັບເຈົ້າ, ແລະ ມັນ
ຈະເປັນພັນທະສັນຍາລະຫວ່າງເຮົາ ແລະ
ເຈົ້າ, ແລະ ລູກຫລານຂອງເຈົ້າ ນັບຈາກ
ເຈົ້າ, ໃນລຸ້ນຂອງພວກເຂົາ; ເພື່ອເຈົ້າຈະຮູ້
ໄປຕະຫລອດການວ່າ ເດັກນ້ອຍບໍ່ຕ້ອງຮັບ
ຜິດຊອບຕໍ່ໜ້າເຮົາ ຈົນກວ່າເຂົາເຖິງແປດ
ປີ.
12 ແລະ ເຈົ້າ ຕ້ອງ ຍຶດ ຖື ທີ່ ຈະ ຮັກ ສາ
ພັນທະສັນຍາທັງໝົດຂອງເຮົາ ຊຶ່ງພັນທະ
ສັນຍາເຫລົ່ານັ້ນ ເຮົາໄດ້ເຮັດໄວ້ກັບບັນພະ
ບຸລຸດຂອງເຈົ້າ; ແລະ ເຈົ້າຕ້ອງຮັກສາພຣະ
ບັນຍັດ ທີ່ເຮົາໄດ້ປະທານໃຫ້ແກ່ເຈົ້າ ດ້ວຍ
ປາກຂອງເຮົາເອງ, ແລະ ເຮົາຈະເປັນພຣະ
ເຈົ້າຂອງເຈົ້າ ແລະ ເປັນພຣະເຈົ້າຂອງລູກ
ຫລານຂອງເຈົ້າ ນັບຈາກເຈົ້າ.

**ປຈສ, ປະຖົມມະການ 17:23–24.**

ປຽບທຽບໃສ່ກັບ ປະຖົມມະການ 17:17–18

ອັບຣາຮາມປິຕິຍິນດີກັບຄຳທຳນາຍກ່ຽວກັບການເກີດຂອງອີຊາກ ແລະ ອະທິຖານເພື່ອອິດຊະມາເອນ.

23 ຈາກນັ້ນອັບຣາຮາມໄດ້ກົ້ມຂາບລົງຈົນເຖິງພື້ນດິນ ແລະ *ປິຕິຍິນດີ,* ແລະ ໄດ້ກ່າວຢູ່ໃນໃຈວ່າ, ຈະມີເດັກມາເກີດນຳຄົນທີ່ມີອາຍຸໜຶ່ງຮ້ອຍປີ, ແລະ ນາງຊາຣາ ຜູ້ມີອາຍຸເກົ້າສິບປີ *ຈະເປັນຄົນໃຫ້ກຳເນີດ.*

24 ແລະ ອັບຣາຮາມ ໄດ້ກ່າວຕໍ່ພຣະເຈົ້າວ່າ, ໂອ້ ຂ້າແດ່ພຣະອົງເຈົ້າ ເປັນຫຍັງບໍ່ໃຫ້ອິດຊະມາເອນ ເປັນຜູ້ສືບແທນມໍລະດົກຂອງຂ້ານ້ອຍ*ຢ່າງພາກພູມໃຈ!*

**ປຈສ, ປະຖົມມະການ 19:9–15.**

ປຽບທຽບໃສ່ກັບ ປະຖົມມະການ 19:8–10

ໂລດຕໍ່ຕ້ານຄວາມຊົ່ວຮ້າຍຂອງເມືອງໂຊໂດມ, ແລະທູດປົກປ້ອງລາວ.

9 ແລະ ພວກ ເຂົາ ໄດ້ ກ່າວ*ກັບ ລາວ*ວ່າ ຖອຍ ໄປ. *ແລະ ພວກເຂົາໄດ້ໃຈຮ້າຍ ໃຫ້ລາວ.*

10 ແລະ ພວກ ເຂົາ ໄດ້ ເວົ້າ*ໃນ ບັນ ດາພວກເຂົາເອງ*ວ່າ *ຊາຍ*ຄົນນີ້ໄດ້ມາພັກ*ຢູ່ນຳພວກເຮົາ,* ແລະ *ບັດນີ້* ເຂົາຈະ*ຕັ້ງຕົນເອງໃຫ້ເປັນຜູ້ຕັດສິນ;* ບັດນີ້ພວກເຮົາຈະຈັດການກັບ*ລາວ*ໃຫ້ໜັກກວ່າພວກເຂົາ.

11 *ດັ່ງນັ້ນ ພວກເຂົາຈຶ່ງໄດ້ກ່າວກັບຊາຍຄົນນັ້ນວ່າ ພວກເຮົາຈະພາພວກຜູ້ຊາຍໄປ, ແລະ ພວກລູກສາວຂອງເຈົ້ານຳອີກ; ແລະ ພວກເຮົາຈະຈັດການກັບພວກເຂົາ ຕາມແຕ່ພວກເຮົາເຫັນວ່າສົມຄວນ.*

12 *ບັດນີ້ ນີ້ເປັນໄປຕາມຄວາມຊົ່ວຮ້າຍຂອງເມືອງໂຊໂດມ.*

13 ແລະ ໂລດໄດ້ກ່າວວ່າ ຈົ່ງເບິ່ງ, ຂ້ອຍມີລູກສາວຢູ່ສອງຄົນ ທີ່ຍັງບໍ່ເຄີຍຜ່ານຜູ້ຊາຍ ຈັກເທື່ອ; ຂ້ອຍຂໍຮ້ອງນຳພວກເຈົ້າ, *ຂ້ອຍຂໍວິງວອນກັບພວກອ້າຍນ້ອງຂອງຂ້ອຍວ່າ ຂໍບໍ່ໃຫ້*ຂ້ອຍເອົາເຂົາເຈົ້າອອກມາໃຫ້ພວກເຈົ້າ; ແລະ ພວກເຈົ້າຈະ*ບໍ່*ຈັດການກັບພວກເຂົາ ຕາມທີ່ພວກເຈົ້າເຫັນວ່າສົມຄວນ ໃນສາຍຕາຂອງພວກເຈົ້າ;

14 *ເພາະພຣະເຈົ້າຈະບໍ່ຮັບຮອງຜູ້ຮັບໃຊ້ຂອງພຣະອົງໃນສິ່ງນີ້; ດັ່ງນັ້ນ, ຂ້ອຍຂໍວິງວອນກັບພວກອ້າຍນ້ອງຂອງຂ້ອຍ, ເທື່ອດຽວນີ້ເທົ່ານັ້ນ,* ວ່າພວກເຈົ້າຈະບໍ່ເຮັດຫຍັງກັບຜູ້ຊາຍເຫລົ່ານີ້, *ເພື່ອວ່າພວກເຂົາຈະໄດ້ຢູ່ໃນບ້ານຂອງຂ້ອຍດ້ວຍຄວາມສະຫງົບ;* ເພາະສະນັ້ນພວກເຂົາຈຶ່ງໄດ້ມາຢູ່ໃຕ້ຮົ່ມເງົາຫລັງຄາບ້ານຂອງຂ້ອຍ.

15 *ແລະ ພວກເຂົາໄດ້ໃຈຮ້າຍໃຫ້ໂລດ* ແລະ ເຂົ້າມາໃກ້ເພື່ອຈະພັງປະຕູເຂົ້າໄປ, ແຕ່*ທູດຂອງພຣະເຈົ້າ ຜູ້ຊຶ່ງເປັນຊາຍທີ່ບໍລິສຸດ*ໄດ້ເດ່ມືອອກໄປ ແລະ ໄດ້ດຶງໂລດເຂົ້າມາໃນເຮືອນ ມາຫາພວກເພິ່ນ, ແລະ ໄດ້ປິດປະຕູ.

**ປຈສ, ປະຖົມມະການ 21:31–32.**

ປຽບທຽບໃສ່ກັບ ປະຖົມມະການ 21:32–34

ອັບຣາຮາມນະມັດສະການພຣະເຈົ້າຜູ້ດຳລົງຢູ່ຕະຫລອດໄປເປັນນິດ.

31 ແລ້ວ ອາບີເມເຫລັກ, ແລະ ຟີໂກນ, ແມ່ທັບຂອງເພິ່ນ, ໄດ້ໄປ, *ແລະ ພວກເພິ່ນໄດ້ປູກກົກໄມ້ຕົ້ນໜຶ່ງ ທີ່ ເບເອນເຊບາ, ແລະ ໄດ້ຮ້ອງທູນອອກພຣະນາມຂອງພຣະຜູ້ເປັນເຈົ້າ;* ແລະ ພວກເພິ່ນໄດ້ກັບຄືນສູ່ແຜ່ນດິນຟີລິດສະຕິນ.

32 ແລະ ອັບຣາຮາມ *ໄດ້ນະມັດສະການພຣະເຈົ້າຜູ້ດຳລົງຢູ່ຕະຫລອດໄປເປັນນິດ,*

ແລະ ໄດ້ຢູ່ໃນ ແຜ່ນ ດິນ ຟີລິດ ສະຕິນ ເປັນ ເວລານານ.

**ປຈສ, ປະຖົມມະການ 48:5–11.**

ປຽບທຽບໃສ່ກັບ ປະຖົມມະການ 48:5–6

ເອຟະຣາອິມ ແລະ ມານາເຊ ໄດ້ກາຍເປັນເຜົ່າຂອງອິດສະຣາເອນ. ເຊັ່ນດຽວກັບໂຢເຊັບໃນສະໄໝບູຮານໄດ້ຊ່ວຍເຫລືອຊີວິດຄອບຄົວຂອງເພິ່ນທາງຮ່າງກາຍສັນໃດ, ລູກຫລານຂອງເພິ່ນຈະຊ່ວຍເຫລືອຊາວອິດສະຣາເອນທາງວິນຍານສັນນັ້ນ ໃນຍຸກສຸດທ້າຍ.

5 ແລະ ບັດນີ້, ກ່ຽວກັບລູກຊາຍສອງຄົນຂອງເຈົ້າ, ເອຟະຣາອິມ ແລະ ມານາເຊ, ຊຶ່ງໄດ້ເກີດນຳເຈົ້າໃນປະເທດເອຢິບ, ກ່ອນພໍ່ໄດ້ມາຫາເຈົ້າໃນເອຢິບ; *ຈົ່ງເບິ່ງ, ພວກເຂົາເປັນຂອງພໍ່, ແລະ ພຣະເຈົ້າຂອງບັນພະບຸລຸດຂອງພໍ່ຈະອວຍພອນພວກເຂົາ; ແມ່ນແຕ່ເໝືອນດັ່ງ* ຣູເບັນ ແລະ ຊີເມໂອນ, ພວກເຂົາຈະ*ໄດ້ຮັບພອນ, ເພາະພວກເຂົາເປັນຂອງພໍ່; ດັ່ງນັ້ນພວກເຂົາຈຶ່ງຖືກເອີ້ນຕາມຊື່ຂອງພໍ່. (ສະນັ້ນ ພວກເຂົາຈຶ່ງຖືກເອີ້ນວ່າ ອິດສະຣາເອນ.)*

6 ແລະ ຜູ້ສືບທອດຂອງເຈົ້າ ຊຶ່ງເຈົ້າຈະມີຫລັງຈາກນີ້, ຈະເປັນຂອງເຈົ້າ, ແລະ ຈະຖືກເອີ້ນຕາມຊື່ຂອງອ້າຍນ້ອງຂອງພວກເຂົາ ໃນມູນມໍລະດົກຂອງພວກເຂົາ, *ໃນເຜົ່າທັງປວງ; ສະນັ້ນ ພວກເຂົາຈຶ່ງຖືກເອີ້ນວ່າ ເຜົ່າຂອງ ມານາເຊ ແລະ ຂອງເອຟະຣາອິມ.*

*7 ແລະ ຢາໂຄບໄດ້ກ່າວກັບໂຢເຊັບວ່າ, ເມື່ອພຣະເຈົ້າຂອງບັນພະບຸລຸດຂອງພໍ່ ໄດ້ມາປະກົດຕໍ່ພໍ່ທີ່ ລູເຊ, ໃນແຜ່ນດິນການາອານ; ພຣະອົງໄດ້ສັນຍາກັບພໍ່, ວ່າພຣະອົງຈະມອບແຜ່ນດິນນັ້ນໃຫ້ພໍ່ ແລະ ລູກຫລານຂອງພໍ່ ເພື່ອຄອບຄອງຕະຫລອດໄປເປັນນິດ.*

*8 ສະນັ້ນ, ໂອ້ ລູກຂອງພໍ່, ພຣະອົງໄດ້ອວຍພອນພໍ່ ໃນການລ້ຽງດູເຈົ້າໃຫ້ເປັນຜູ້ຮັບໃຊ້ຂອງພໍ່, ໃນການຊ່ວຍເຫລືອຄອບຄົວຂອງພໍ່ໃຫ້ພົ້ນຈາກຄວາມຕາຍ;*

*9 ໃນການປົດປ່ອຍຜູ້ຄົນຂອງພໍ່, ອ້າຍນ້ອງຂອງເຈົ້າ, ຈາກຄວາມອຶດຢາກທີ່ຮ້າຍແຮງໃນແຜ່ນດິນ; ດັ່ງນັ້ນ ພຣະເຈົ້າຂອງບັນພະບຸລຸດຂອງເຈົ້າ ຈະອວຍພອນເຈົ້າ, ແລະ ຜົນແອວຂອງເຈົ້າ, ເພື່ອພວກເຂົາຈະໄດ້ຮັບພອນຫລາຍກວ່າອ້າຍນ້ອງຂອງເຈົ້າ, ແລະ ຫລາຍກວ່າຄອບຄົວຂອງບິດາຂອງເຈົ້າ;*

*10 ເພາະ ເຈົ້າ ໄດ້ ຮັບ ໄຊ ຊະນະ ແລ້ວ, ແລະ ບ້ານຂອງບິດາຂອງເຈົ້າໄດ້ກົ້ມຂາບເຈົ້າ, ແມ່ນແຕ່ດັ່ງທີ່ໄດ້ສະແດງແກ່ເຈົ້າ, ກ່ອນເຈົ້າໄດ້ຖືກຂາຍໄປປະເທດເອຢິບດ້ວຍນ້ຳມືຂອງພວກອ້າຍຂອງເຈົ້າ; ດັ່ງນັ້ນ ພວກອ້າຍຂອງເຈົ້າຈຶ່ງຈະກົ້ມຂາບເຈົ້າ, ຈາກລຸ້ນສູ່ລຸ້ນ, ກັບຜົນແອວຂອງເຈົ້າຕະຫລອດການ;*

*11 ເພາະເຈົ້າຈະເປັນແສງສະຫວ່າງແກ່ຜູ້ຄົນຂອງພໍ່, ເພື່ອປົດປ່ອຍພວກເຂົາໃນວັນແຫ່ງການເປັນຊະເລີຍ, ຈາກຄວາມເປັນທາດ; ແລະ ເພື່ອນຳຄວາມລອດກັບມາໃຫ້ພວກເຂົາ, ເມື່ອພວກເຂົາກົ້ມຂາບຢູ່ໃຕ້ບາບ.*

**ປຈສ, ປະຖົມມະການ 50:24–38.**

ປຽບທຽບໃສ່ກັບ ປະຖົມມະການ 50:24–26; 2 ນີໄຟ 3:4–22

ໂຢເຊັບໃນເອຢິບ ທຳນາຍກ່ຽວກັບໂມເຊປົດປ່ອຍຊາວອິດສະຣາເອນຈາກຄວາມເປັນທາດຂອງຊາວເອຢິບ; ກ່ຽວກັບກິ່ງງ່າຂອງລູກຫລານຂອງໂຢເຊັບຖືກນຳໄປສູ່ແດນໄກ, ບ່ອນທີ່ພວກເຂົາຈະຖືກຈື່ຈຳໃນພັນທະສັນຍາຂອງພຣະຜູ້ເປັນເຈົ້າ; ກ່ຽວກັບພຣະເຈົ້າເອີ້ນສາດສະດາໃນຍຸກສຸດທ້າຍຊື່ໂຈເຊັບໃຫ້ຕໍ່ບັນທຶກຂອງຢູດາ ແລະ ຂອງໂຢເຊັບ ເຂົ້າກັນ; ແລະ ກ່ຽວກັບອາໂຣນຮັບໃຊ້ເປັນຜູ້ກ່າວແທນໂມເຊ.

24 ແລະ ໂຢເຊັບ ໄດ້ກ່າວກັບອ້າຍນ້ອງຂອງລາວວ່າ, *ຂ້ອຍຕາຍ, ແລະ ໄປຫາບັນພະບຸລຸດຂອງຂ້ອຍ; ແລະ ຂ້ອຍລົງໄປສູ່ຫລຸມສົບຂອງຂ້ອຍດ້ວຍຄວາມຊື່ນຊົມ. ພຣະເຈົ້າຂອງຢາໂຄບ ບິດາຂອງຂ້ອຍ ຈະຢູ່ກັບພວກເຈົ້າ, ເພື່ອປົດປ່ອຍພວກເຈົ້າຈາກຄວາມທຸກຍາກລຳບາກ ໃນວັນເວລາແຫ່ງຄວາມເປັນທາດຂອງພວກເຈົ້າ; ເພາະພຣະຜູ້ເປັນເຈົ້າ ໄດ້ມາຢ້ຽມຢາມຂ້ອຍ, ແລະ ຂ້ອຍໄດ້ຮັບຄຳສັນຍາຈາກພຣະຜູ້ເປັນເຈົ້າ, ວ່າຈາກຜົນແອວຂອງຂ້ອຍ, ອົງພຣະຜູ້ເປັນເຈົ້າຈະຍົກກິ່ງງ່າທີ່ຊອບທຳຂອງຜົນແອວຂອງຂ້ອຍຂຶ້ນມາ; ແລະ ກັບພວກເຈົ້າ, ຜູ້ຊຶ່ງຢາໂຄບ ບິດາຂອງຂ້ອຍໄດ້ຕັ້ງຊື່ວ່າ ອິດສະຣາເອນ, ຈະຍົກສາດສະດາຜູ້ໜຶ່ງຂຶ້ນ; (ບໍ່ແມ່ນພຣະເມຊີອາ ຜູ້ທີ່ຖືກເອີ້ນວ່າ ຊີໂລ;) ແລະ ສາດສະດາຜູ້ນີ້ຈະປົດປ່ອຍຜູ້ຄົນຂອງເຮົາອອກຈາກເອຢິບໃນວັນເວລາແຫ່ງຄວາມເປັນທາດຂອງພວກເຈົ້າ.*

25 *ແລະ ເຫດການ ຈະ ບັງ ເກີດ ຂຶ້ນ ຄືພວກເຂົາຈະກະຈັດກະຈາຍໄປອີກ; ແລະ ກິ່ງງ່າໜຶ່ງຈະຖືກຫັກອອກໄປ, ແລະ ຈະຖືກພາໄປຫາປະເທດທີ່ຢູ່ໃນແດນໄກ; ເຖິງຢ່າງໃດກໍຕາມ ພວກເຂົາຈະຖືກຈົດຈຳໄວ້ໃນພັນທະສັນຍາຂອງພຣະຜູ້ເປັນເຈົ້າ, ເວລາພຣະເມຊີອາສະເດັດມາ; ເພາະພຣະອົງຈະຖືກສະແດງໃຫ້ປະຈັກແກ່ພວກເຂົາໃນຍຸກສຸດທ້າຍ, ດ້ວຍພຣະວິນຍານແຫ່ງອຳນາດ; ແລະ ຈະນຳພວກເຂົາອອກຈາກຄວາມມືດ ເຂົ້າສູ່ຄວາມສະຫວ່າງ; ອອກຈາກຄວາມມືດທີ່ປິດບັງ, ແລະ ອອກຈາກຄວາມເປັນຊະເລີຍໄປຫາອິດສະລະ.*

26 *ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຂ້າພະເຈົ້າ ຈະຍົກຜູ້ພະຍາກອນຜູ້ໜຶ່ງຂຶ້ນມາໃຫ້ແກ່ຜົນແອວຂອງຂ້າພະເຈົ້າ ຊຶ່ງຈະເປັນຜູ້ພະຍາກອນທີ່ປະເສີດ.*

27 *ອົງພຣະຜູ້ເປັນເຈົ້າຂອງບັນພະບຸລຸດຂອງຂ້າພະເຈົ້າ ໄດ້ກ່າວກັບຂ້າພະເຈົ້າດັ່ງນີ້: ເຮົາຈະຍົກຜູ້ພະຍາກອນທີ່ປະເສີດຜູ້ໜຶ່ງຂຶ້ນຈາກຜົນແອວຂອງເຈົ້າ. ແລະ ລາວຈະເປັນຜູ້ທີ່ໜ້ານັບຖືຢ່າງສູງໃນບັນດາຜົນແອວຂອງເຈົ້າ; ແລະ ເຮົາຈະໃຫ້ບັນຍັດແກ່ລາວເພື່ອລາວຈະໄດ້ກະທຳວຽກງານສິ່ງໜຶ່ງເພື່ອຜົນແອວຂອງເຈົ້າ, ຜູ້ເປັນພີ່ນ້ອງຂອງລາວ.*

28 *ແລະ ລາວ ຈະ ນຳ ພວກ ເຂົາ ມາ ສູ່ຄວາມຮູ້ຂອງພັນທະສັນຍາ ຊຶ່ງເຮົາໄດ້ເຮັດໄວ້ກັບບັນພະບຸລຸດຂອງເຈົ້າ; ແລະ ລາວຈະເຮັດວຽກງານໃດກໍຕາມທີ່ເຮົາຈະບັນຊາລາວ.*

29 *ແລະ ເຮົາຈະເຮັດໃຫ້ລາວຍິ່ງໃຫຍ່ໃນສາຍຕາຂອງເຮົາ; ເພາະລາວຈະເຮັດວຽກງານຂອງເຮົາ; ແລະ ລາວຈະຍິ່ງໃຫຍ່ເໝືອນຜູ້ທີ່ເຮົາໄດ້ກ່າວວ່າ ເຮົາຈະຍົກຂຶ້ນໃຫ້ເຈົ້າ, ເພື່ອປົດປ່ອຍຜູ້ຄົນຂອງເຮົາ, ໂອ້ເຊື້ອສາຍອິດສະຣາເອນ, ອອກຈາກແຜ່ນດິນເອຢິບ; ເພາະເຮົາຈະຍົກຜູ້ພະຍາກອນຜູ້ໜຶ່ງຂຶ້ນ ເພື່ອປົດປ່ອຍຜູ້ຄົນຂອງເຮົາອອກຈາກແຜ່ນດິນເອຢິບ; ແລະ ລາວຈະຖືກເອີ້ນວ່າ ໂມເຊ. ແລະ ໂດຍຊື່ຂອງລາວ, ລາວຈະຮູ້ວ່າ ລາວເປັນເຊື້ອສາຍຂອງເຈົ້າ; ເພາະລາວຈະໄດ້ຮັບການລ້ຽງດູໂດຍທິດາຂອງກະສັດ, ແລະ ຈະຖືກເອີ້ນວ່າເປັນບຸດຊາຍຂອງນາງ.*

30 *ແລະ ອີກເທື່ອໜຶ່ງ, ເຮົາຈະຍົກຜູ້ພະຍາກອນຜູ້ໜຶ່ງຂຶ້ນຈາກຜົນແອວຂອງເຈົ້າ; ແລະ ເຮົາຈະໃຫ້ອຳນາດແກ່ລາວ ເພື່ອຈະນຳຄຳເວົ້າຂອງເຮົາອອກມາສູ່ລູກຫລານຂອງຜົນແອວຂອງເຈົ້າ; ແລະ ບໍ່ພຽງແຕ່ເພື່ອການນຳຄຳເວົ້າຂອງເຮົາອອກມາເທົ່ານັ້ນ, ພຣະຜູ້ເປັນເຈົ້າໄດ້ກ່າວ, ແຕ່ຈະເຮັດ*

*ໃຫ້ພວກເຂົາໝັ້ນໃຈໃນຄຳເວົ້າຂອງເຮົາ, ຊຶ່ງຈະອອກໄປໃນບັນດາພວກເຂົາແລ້ວໃນຍຸກສຸດທ້າຍ;*
31 *ດັ່ງນັ້ນ, ຜົນແອວຂອງເຈົ້າຈະບັນທຶກ; ແລະ ຜົນແອວຂອງຢູດາຈະບັນທຶກ; ແລະ ເລື່ອງທີ່ຈະຖືກບັນທຶກໄວ້ໂດຍຜົນແອວຂອງເຈົ້າ, ແລະ ເລື່ອງທີ່ຈະຖືກບັນທຶກໄວ້ຈາກຜົນແອວຂອງຢູດາຈະເຕີບໂຕພ້ອມກັນ, ຊຶ່ງນຳໄປຫາການເຮັດໃຫ້ຄຳສອນທີ່ຜິດນັ້ນຍອມຈຳນົນ ແລະ ກຳຈັດການຂັດແຍ້ງ, ແລະ ສະຖາປະນາສັນຕິສຸກໃນບັນດາຜົນແອວຂອງເຈົ້າ, ແລະ ນຳພວກເຂົາມາສູ່ຄວາມຮູ້ເຖິງບັນພະບຸລຸດຂອງພວກເຂົາໃນຍຸກສຸດທ້າຍ, ແລະ ນຳມາສູ່ຄວາມຮູ້ເລື່ອງພັນທະສັນຍາຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.*
32 *ແລະ ຈາກຄວາມອ່ອນແອ ລາວຈະຖືກເຮັດໃຫ້ເຂັ້ມແຂງຂຶ້ນ, ໃນວັນນັ້ນເມື່ອວຽກງານຂອງເຮົາຈະອອກໄປໃນບັນດາຜູ້ຄົນທັງປວງຂອງເຮົາ, ຊຶ່ງຈະນຳພວກເຂົາກັບຄືນ, ຜູ້ເປັນເຊື້ອສາຍອິດສະຣາເອນ, ໃນຍຸກສຸດທ້າຍ.*
33 *ແລະ ເຮົາຈະອວຍພອນຜູ້ພະຍາກອນຜູ້ນັ້ນ, ແລະ ຜູ້ທີ່ພະຍາຍາມທຳລາຍລາວຈະຍອມຈຳນົນ; ເພາະຄຳສັນຍານີ້ເຮົາມອບໃຫ້ເຈົ້າ; ເພາະເຮົາຈະຈື່ຈຳເຈົ້າຈາກລຸ້ນສູ່ລຸ້ນ; ແລະ ຊື່ຂອງລາວຈະຖືກເອີ້ນວ່າ ໂຈເຊັບ, ແລະ ຈະເປັນຕາມຊື່ຂອງບິດາຂອງລາວ; ແລະ ລາວຈະເປັນເໝືອນດັ່ງເຈົ້າ; ເພາະເລື່ອງທີ່ພຣະຜູ້ເປັນເຈົ້າຈະນຳອອກມາໂດຍມືຂອງລາວ ຈະນຳຜູ້ຄົນຂອງເຮົາໄປສູ່ຄວາມລອດ.*
34 *ແລະ ພຣະຜູ້ເປັນເຈົ້າໄດ້ສາບານກັບໂຢເຊັບວ່າ ພຣະອົງຈະຮັກສາລູກຫລານຂອງລາວຕະຫລອດໄປ, ໂດຍກ່າວວ່າ, ເຮົາຈະຍົກໂມເຊຂຶ້ນ, ແລະ ໄມ້ຄ້ອນເທົ້າຈະຢູ່ໃນມືຂອງລາວ, ແລະ ລາວຈະເຕົ້າໂຮມຜູ້ຄົນຂອງເຮົາ, ແລະ ລາວຈະນຳພາພວກເຂົາໄປດັ່ງຝູງແກະ, ແລະ ລາວຈະຕີຜືນນ້ຳທະເລແດງດ້ວຍໄມ້ຄ້ອນເທົ້າຂອງລາວ.*
35 *ແລະ ລາວຈະໄດ້ຮັບການພິພາກສາ, ແລະ ຈະຂຽນພຣະຄຳຂອງພຣະຜູ້ເປັນເຈົ້າ. ແລະ ລາວຈະບໍ່ເວົ້າຫລາຍ, ເພາະເຮົາຈະຂຽນກົດຂອງເຮົາໃຫ້ລາວດ້ວຍນີ້ວມືຂອງເຮົາເອງ. ແລະ ເຮົາຈະໃຫ້ມີຜູ້ເວົ້າແທນລາວ, ແລະ ຊື່ຂອງລາວຈະຖືກເອີ້ນວ່າ ອາໂຣນ.*
36 *ແລະ ສິ່ງນີ້ຈະເກີດຂຶ້ນກັບເຈົ້າໃນຍຸກສຸດທ້າຍຄືກັນ, ແມ່ນແຕ່ດັ່ງທີ່ເຮົາໄດ້ສາບານໄວ້. ສະນັ້ນ,* ໂຢເຊັບໄດ້ກ່າວກັບອ້າຍນ້ອງຂອງລາວວ່າ ພຣະເຈົ້າຈະມາຢ້ຽມຢາມພວກເຈົ້າຢ່າງແນ່ນອນ, ແລະ ນຳພວກເຈົ້າອອກຈາກແຜ່ນດິນນີ້, ໄປຫາແຜ່ນດິນທີ່ພຣະອົງສາບານວ່າຈະປະທານໃຫ້ແກ່ອັບຣາຮາມ, ແລະ ໃຫ້ແກ່ອີຊາກ, ແລະ ໃຫ້ແກ່ຢາໂຄບ.
37 ແລະ ໂຢເຊັບ *ໄດ້ຢືນຢັນຫລາຍເລື່ອງອື່ນອີກກັບອ້າຍນ້ອງຂອງລາວ,* ແລະ ໄດ້ໃຫ້ລູກຫລານຂອງອິດສະຣາເອນກ່າວຄຳປະຕິຍານ, ໂດຍກ່າວຕໍ່ພວກເຂົາວ່າ ພຣະເຈົ້າຈະມາຢ້ຽມຢາມພວກເຈົ້າຢ່າງແນ່ນອນ, ແລະ ພວກເຈົ້າຈະເອົາກະດູກຂອງຂ້ອຍໄປຈາກບ່ອນນີ້.
38 ສະນັ້ນ ໂຢເຊັບໄດ້ເສຍຊີວິດໄປຕອນ*ມີ*ອາຍຸໄດ້ໜຶ່ງຮ້ອຍສິບປີ; ແລະ ພວກເຂົາໄດ້ອາບນ້ຳຢາຮັກສາລາວໄວ້, ແລະ *ພວກເຂົາໄດ້ຮັກສາສົບຂອງລາວໄວ້ໃນໂລງສົບ* ໃນປະເທດເອຢິບ; *ແລະ ລູກຫລານຂອງອິດສະຣາເອນໄດ້ຮັກສາສົບຂອງລາວໄວ້ຈາກການຝັງ, ເພື່ອວ່າລາວຈະຖືກນຳໄປຝັງໄວ້ໃນອຸບມຸງກັບບິດາຂອງລາວ. ແລະ*

*ດັ່ງນັ້ນ ພວກເຂົາໄດ້ຈື່ຈຳຄຳສາບານຂອງພວກເຂົາ ທີ່ພວກເຂົາ ໄດ້ສາບານໄວ້ກັບລາວ.*

**ປຈສ, ອົບພະຍົບ 4:21.** ປຽບທຽບໃສ່ກັບ ອົບພະຍົບ 4:21; 7:3, 13; 9:12; 10:1, 20, 27; 11:10; 14:4, 8, 17; ພຣະບັນຍັດສອງ 2:30

ພຣະຜູ້ເປັນເຈົ້າບໍ່ຮັບຜິດຊອບສຳລັບໃຈທີ່ແຂງກະດ້າງຂອງຟາຣາໂອ. ເບິ່ງ ປຈສ, ອົບພະຍົບ 7:3, 13; 9:12; 10:1, 20, 27; 11:10; 14:4, 8, 17 ນຳອີກ; ຂໍ້ອ້າງອີງແຕ່ລະຂໍ້, ເມື່ອແປຢ່າງຖືກຕ້ອງ, ສະແດງໃຫ້ເຫັນວ່າ ຟາຣາໂອເອງໄດ້ເຮັດໃຈແຂງກະດ້າງ.

21 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ໂມເຊວ່າ ເມື່ອເຈົ້າກັບໄປປະເທດເອຢິບ,
ຈົ່ງເບິ່ງວ່າເຈົ້າເຮັດການມະຫັດສະຈັນທັງ
ປວງຢູ່ຕໍ່ໜ້າຟາຣາໂອ, ຊຶ່ງເຮົາໄດ້ວາງໄວ້
ໃນມືຂອງເຈົ້າ, *ແລະ ເຮົາຈະເຮັດໃຫ້ເຈົ້າ
ຮຸ່ງເຮືອງ;* ແຕ່ຟາຣາໂອຈະເຮັດໃຈແຂງກະ
ດ້າງ, *ແລະ* ລາວຈະບໍ່ປ່ອຍໃຫ້ຜູ້ຄົນໄປ.

**ປຈສ, ອົບພະຍົບ 4:24–27.** ປຽບທຽບໃສ່ກັບ ອົບພະຍົບ 4:24–27

ເມື່ອພຣະຜູ້ເປັນເຈົ້າຂູ່ວ່າ ຈະຂ້າໂມເຊ ເພາະເພິ່ນບໍ່ໄດ້ເຮັດພິທີຕັດໃຫ້ລູກຊາຍຂອງເພິ່ນ, ນາງສິບໂປຣາ ເມຍຂອງເພິ່ນ ໄດ້ເຮັດພິທີຕັດແທນເພິ່ນ. ໂມໄຊສາລະພາບບາບຂອງເພິ່ນ.

24 ແລະ ເຫດການໄດ້ບັງເກີດຂຶ້ນ, *ຄື
ພຣະຜູ້ເປັນເຈົ້າໄດ້ປະກົດຕໍ່ເພິ່ນ ໃນບ່ອນ
ພັກແຮມ ໃນລະຫວ່າງ*ການເດີນທາງ. *ພຣະ
ຜູ້ເປັນເຈົ້າໄດ້ພຣະພິໂລດໃຫ້ໂມເຊ, ແລະ
ໄດ້ໝາຍທີ່ຈະຂ້າເພິ່ນ; ເພາະເພິ່ນບໍ່ໄດ້
ເຮັດພິທີຕັດໃຫ້ລູກຊາຍຂອງເພິ່ນ.*
25 ແລ້ວສິບໂປຣາ ໄດ້ຈັບເອົາຫີນຄົມ
ແລະ *ເຮັດພິທີຕັດ* ໃຫ້ລູກຊາຍຂອງຕົນ,
ແລະ ໄດ້ເອົາ*ກ້ອນຫີນ* ໄປແປະໄວ້ໃກ້ຕີນ
ຂອງເພິ່ນ, ແລະ ໄດ້ເວົ້າວ່າ, *ເຈົ້າແມ່ນ
ຜົວທີ່ຂ້ອຍໄດ້ມາດ້ວຍເລືອດແທ້ໆ.*
26 *ແລະ ພຣະຜູ້ເປັນເຈົ້າໄດ້ໄວ້ຊີວິດ
ຂອງໂມເຊ ແລະ ປ່ອຍເພິ່ນໄປ, ຍ້ອນ
ສິບໂປຣາ, ເມຍຂອງເພິ່ນ, ໄດ້ເຮັດພິທີຕັດ
ໃຫ້ລູກຊາຍ. ແລະ* ນາງໄດ້ເວົ້າວ່າ, ເຈົ້າ
ແມ່ນຜົວທີ່ຂ້ອຍໄດ້ມາດ້ວຍເລືອດ. *ແລະ
ໂມເຊໄດ້ອັບອາຍ, ແລະ ໄດ້ຫລົບໜ້າຈາກ
ພຣະຜູ້ເປັນເຈົ້າ, ແລະ ໄດ້ກ່າວວ່າ, ຂ້າ
ນ້ອຍໄດ້ເຮັດບາບຢູ່ຕໍ່ພຣະພັກຂອງພຣະຜູ້
ເປັນເຈົ້າ.*
27 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ອາໂຣນວ່າ, ຈົ່ງອອກໄປພົບໂມເຊທີ່ຖິ່ນ
ແຫ້ງແລ້ງກັນດານ, ແລະ ເພິ່ນໄດ້ໄປພົບ
ເພິ່ນ, ທີ່ພູເຂົາຂອງພຣະເຈົ້າ; *ບ່ອນທີ່ພຣະ
ເຈົ້າໄດ້ປະກົດຕໍ່ເພິ່ນ;* ແລະ *ອາໂຣນ* ໄດ້
ກອດຈູບເພິ່ນ.

**ປຈສ, ອົບພະຍົບ 8:1.** ປຽບທຽບໃສ່ກັບ ອົບພະຍົບ 18:1

ເຢທະໂຣເປັນມະຫາປະໂລຫິດ.

1 ເມື່ອເຢທະໂຣ, *ມະຫາປະໂລຫິດ*ຂອງມີ
ດີອານ, ພໍ່ເຖົ້າຂອງໂມເຊ, ໄດ້ຍິນເຖິງທຸກສິ່ງ
ທີ່ພຣະເຈົ້າໄດ້ກະທຳເພື່ອໂມເຊ, ແລະ ເພື່ອ
ອິດສະຣາເອນ ຜູ້ຄົນຂອງເພິ່ນ, ແລະ ວ່າ
ພຣະຜູ້ເປັນເຈົ້າ ໄດ້ນຳຊາວອິດສະຣາເອນ
ອອກມາຈາກປະເທດເອຢິບ;

**ປຈສ, ອົບພະຍົບ 22:18.** ປຽບທຽບໃສ່ກັບ ອົບພະຍົບ 22:18

ຄາດຕະກອນຈະຕ້ອງຕາຍ.

18 ຢ່າທົນໃຫ້*ຄາດຕະກອນ*ມີຊີວິດ.

**ປຈສ, ອົບພະຍົບ 32:14.** ປຽບທຽບໃສ່ກັບ ອົບພະຍົບ 32:14

ພຣະຜູ້ເປັນເຈົ້າຈະໄວ້ຊີວິດຊາວອິດສະຣາເອນ ຜູ້ກັບໃຈ.

14 ແລະ ພຣະ ຜູ້ ເປັນ ເຈົ້າ *ໄດ້ ກ່າວ ກັບ
ໂມເຊວ່າ, ຖ້າຫາກພວກເຂົາກັບ ໃຈ* ຈາກ
ສິ່ງຊົ່ວຮ້າຍທີ່ *ພວກເຂົາໄດ້ເຮັດ, ແລ້ວເຮົາ
ຈະໄວ້ຊີວິດພວກເຂົາ, ແລະ ຫັນຄວາມພິ
ໂລດຂອງເຮົາໄປຈາກພວກເຂົາ; ແຕ່, ຈົ່ງ
ເບິ່ງ, ແຕ່ເຈົ້າຕ້ອງລົງໂທດ ທຸກຄົນທີ່ບໍ່ກັບ
ໃຈຈາກຄວາມຊົ່ວຮ້າຍ ໃນມື້ນີ້.* ສະນັ້ນ, *ຈົ່ງ
ເບິ່ງວ່າ ເຈົ້າເຮັດສິ່ງນີ້ ທີ່ເຮົາໄດ້ບັນຊາເຈົ້າ,
ຖ້າບໍ່ດັ່ງນັ້ນ ເຮົາຈະລົງໂທດທຸກຄົນທີ່ເຮົາ
ໄດ້* ຄິດທີ່ຈະກະທຳກັບຜູ້ຄົນ*ຂອງເຮົາ.*

**ປຈສ, ອົບພະຍົບ 33:20, 23.** ປຽບທຽບ
ໃສ່ກັບ ອົບພະຍົບ 33:20, 23

ບໍ່ມີມະນຸດທີ່ບາບໜາຄົນໃດ ຈະສາມາດເຫັນພຣະ
ພັກຂອງພຣະເຈົ້າ ແລະ ມີຊີວິດ.

20 ແລະ ພຣະອົງໄດ້ກ່າວ*ກັບ ໂມເຊວ່າ*
ເຈົ້າບໍ່ສາມາດເຫັນໜ້າເຮົາ*ໃນເວລານີ້,
ຢ້ານວ່າຄວາມໂມໂຫຂອງເຮົາ ຈະເກີດນຳ
ເຈົ້າຄືກັນ, ແລະ ເຮົາທຳລາຍເຈົ້າ ແລະ ຜູ້
ຄົນຂອງເຈົ້າ;* ເພາະບໍ່ມີຄົນໃດ*ໃນບັນດາ
ພວກເຂົາ*ທີ່ເຫັນໜ້າເຮົາ*ໃນເວລານີ້,* ແລະ
ມີຊີວິດຢູ່, *ເພາະພວກເຂົາມີບາບຫລາຍທີ່
ສຸດ. ແລະ ບໍ່ມີໃນເວລາໃດ ທີ່ມະນຸດບາບ
ໜາເຄີຍເຫັນໜ້າເຮົາ, ແລະ ກໍບໍ່ມີໃນເວລາ
ໃດ ທີ່ມະນຸດບາບໜາຈະເຫັນໜ້າເຮົາ
ແລະ ມີຊີວິດຢູ່.*

23 ແລະ ເຮົາຈະເອົາມືຂອງເຮົາອອກ,
ແລະ ເຈົ້າຈະເຫັນຫລັງຂອງເຮົາ, ແຕ່ຈະບໍ່
ເຫັນໜ້າເຮົາ, *ໃນເວລາໃດກໍຕາມ; ເພາະ
ເຮົາໂມໂຫໃຫ້ຊາວອິດສະຣາເອນ ຜູ້ຄົນ
ຂອງເຮົາ.*

**ປຈສ, ອົບພະຍົບ 34: 1–2, 14.**
ປຽບທຽບໃສ່ກັບ ອົບພະຍົບ
34:1–2, 14; ຄພ 84:21–26

ອີກເທື່ອໜຶ່ງ ພຣະເຈົ້າຂຽນກົດໃສ່ໃນແຜ່ນຫີນ ທີ່
ໂມເຊໄດ້ຕຽມມາ ແຕ່ໄດ້ເອົາຖານະປະໂລຫິດແຫ່ງ
ເມນຄີເສເດັກ ແລະ ພິທີການຂອງມັນໄປ ຈາກລູກ
ຫລານຂອງອິດສະຣາເອນ. ພຣະອົງໄດ້ປະທານ
ພຣະບັນຍັດຝ່າຍໂລກໃຫ້ພວກເຂົາແທນ.

1 ແລະ ພຣະຜູ້ເປັນເຈົ້າ ໄດ້ກ່າວກັບ
ໂມເຊວ່າ, ຈົ່ງຕັດຫີນສອງແຜ່ນ*ອື່ນອີກ* ໃຫ້
ຄືເທື່ອທຳອິດ, ແລະ ເຮົາຈະຂຽນຖ້ອຍຄຳ
ແລະ ກົດໃສ່ *ໃນນັ້ນຄືກັນ, ຕາມທີ່ມັນໄດ້ຖືກ
ຂຽນໄວ້ໃນ*ຫີນແຜ່ນທຳອິດທີ່ເຈົ້າໄດ້ເຮັດ
ແຕກ; *ແຕ່ຈະບໍ່ເໝືອນແຜ່ນທຳອິດ, ເພາະ
ເຮົາຈະເອົາຖານະປະໂລຫິດໄປຈາກພວກ
ເຂົາ; ສະນັ້ນ ລະບຽບທີ່ສັກສິດຂອງເຮົາ,
ແລະ ພິທີການໃນນັ້ນ, ຈະບໍ່ນຳໜ້າພວກ
ເຂົາໄປ; ເພາະການປະທັບຢູ່ຂອງເຮົາຈະບໍ່
ດຳເນີນໄປໃນທ່າມກາງພວກເຂົາ, ຢ້ານວ່າ
ເຮົາຈະທຳລາຍພວກເຂົາ.*

2 *ແຕ່ເຮົາຈະມອບກົດໃຫ້ແກ່ພວກເຂົາ
ດັ່ງເທື່ອທຳອິດ, ແຕ່ມັນຈະເປັນຕາມກົດ
ຂອງບັນຍັດຝ່າຍ ໂລກ; ເພາະເຮົາໄດ້
ສາບານໃນຄວາມຄຽດແຄ້ນຂອງເຮົາ, ວ່າ
ພວກເຂົາຈະບໍ່ເຂົ້າໄປໃນທີ່ປະທັບຂອງ
ເຮົາ, ເຂົ້າໄປໃນທີ່ພັກຂອງເຮົາ, ໃນວັນ
ເວລາແຫ່ງການເດີນທາງຂອງພວກເຂົາ.
ສະນັ້ນ ຈົ່ງເຮັດຕາມທີ່ເຮົາໄດ້ບັນຊາເຈົ້າ,
ແລະ ຈົ່ງຕຽມພ້ອມໃນມື້ອື່ນເຊົ້າ,* ແລະ ຂຶ້ນ
ມາເທິງພູຊີນາຍໃນຕອນເຊົ້າ, ແລະ ໄປພົບ
ເຮົາຢູ່ທີ່ນັ້ນ, ເທິງຈອມພູ.

ພຣະເຢໂຮວາເປັນພຣະນາມໜຶ່ງອີກຂອງອົງພຣະ
ເຢຊູຄຣິດເຈົ້າ ຊຶ່ງຜູ້ຄົນໃນພຣະຄຳພີເດີມຮູ້ຈັກ.

14ເພາະເຈົ້າຈະບໍ່ນະມັດສະການພຣະອື່ນ
ອີກ; ເພາະພຣະຜູ້ເປັນເຈົ້າ, ຜູ້ຊຶ່ງມີພຣະ
ນາມວ່າ *ພຣະເຢໂຮວາ*, ເປັນພຣະເຈົ້າທີ່
ຫວງແຫນ.

**ປຈສ, ພຣະບັນຍັດສອງ 10:2.** ປຽບທຽບໃສ່ກັບ ພຣະບັນຍັດສອງ 10:2

ຢູ່ໃນແຜ່ນຫີນຊຸດທຳອິດ ພຣະເຈົ້າເປີດເຜີຍພັນທະສັນຍາອັນເປັນນິດຂອງຖານະປະໂລຫິດສັກສິດ.

2 ແລະ ເຮົາຈະຂຽນຖ້ອຍຄຳໃສ່ໃນແຜ່ນຫີນ ອັນທີ່ເຮົາໄດ້ຂຽນ *ໃສ່ໃນ*ແຜ່ນຫີນແຜ່ນເກົ່າ, ທີ່ເຈົ້າໄດ້ເຮັດແຕກ, *ຍົກເວັ້ນແຕ່ຖ້ອຍຄຳຂອງພັນທະສັນຍາອັນເປັນນິດຂອງຖານະປະໂລຫິດສັກສິດ,* ແລະ ໃຫ້ເຈົ້າເອົາມັນໄວ້ໃນຫີບ.

**ປຈສ, 1 ຊາມູເອນ 16:14–16, 23.** ປຽບທຽບໃສ່ກັບ 1 ຊາມູເອນ 16:14–16, 23; ມີການປ່ຽນທີ່ຄ້າຍຄືກັນ ໃນ 1 ຊາມູເອນ 18:10 ແລະ 19:9

ວິນຍານຊົ່ວຮ້າຍທີ່ເຂົ້າສິງຢູ່ໃນໂຊນ ບໍ່ແມ່ນມາຈາກພຣະຜູ້ເປັນເຈົ້າ.

14 ແຕ່ພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ໄປຈາກໂຊນ, ແລະ ວິນຍານຊົ່ວຮ້າຍ *ຊຶ່ງບໍ່ແມ່ນມາຈາກ*ພຣະຜູ້ເປັນເຈົ້າໄດ້ມາທໍລະມານເພິ່ນ.

15 ແລະ ພວກຄົນໃຊ້ຂອງໂຊນໄດ້ກ່າວກັບເພິ່ນວ່າ, ຈົ່ງເບິ່ງ ບັດນີ້, ວິນຍານຊົ່ວຮ້າຍ *ຊຶ່ງບໍ່ແມ່ນມາຈາກ*ພຣະເຈົ້າ ໄດ້ມາທໍລະມານທ່ານ.

16 ຈົ່ງໃຫ້ທ່ານອອກຄຳສັ່ງຜູ້ຮັບໃຊ້ຂອງທ່ານມາເທີ້ນ, ຊຶ່ງຢູ່ຕໍ່ໜ້າທ່ານ, ໃຫ້ໄປຊອກຫາຊາຍຄົນໜຶ່ງ, ຜູ້ມີຝີມືໃນການດີດພິນ; ແລະ ເຫດການຈະບັງເກີດຂຶ້ນ, ເມື່ອວິນຍານຊົ່ວຮ້າຍ, *ຊຶ່ງບໍ່ແມ່ນມາຈາກ*ພຣະເຈົ້າ, ມາເຂົ້າສິງທ່ານ, ຊາຍຄົນນັ້ນຈະດີດພິນຂອງລາວ, ແລະ ທ່ານກໍຈະເປັນປົກກະຕິ.

23 ແລະ ເຫດການໄດ້ບັງເກີດຂຶ້ນ, ເມື່ອວິນຍານຊົ່ວຮ້າຍ, *ຊຶ່ງບໍ່ແມ່ນມາຈາກ*ພຣະເຈົ້າ, ໄດ້ເຂົ້າສິງໂຊນ, ດາວິດກໍໄດ້ຍົກພິນຂຶ້ນ, ແລະ ໄດ້ດີດດ້ວຍມືຂອງລາວ; ສະນັ້ນໂຊນຈຶ່ງຮູ້ສຶກສະບາຍຂຶ້ນ, ແລະ ເປັນປົກກະຕິ, ແລະ ວິນຍານຊົ່ວຮ້າຍໄດ້ອອກໄປຈາກເພິ່ນ.

**ປຈສ, 2 ຊາມູເອນ 12:13.** ປຽບທຽບໃສ່ກັບ 2 ຊາມູເອນ 12:13

ພຣະເຈົ້າບໍ່ໄດ້ຍົກບາບຮ້າຍແຮງໄປຈາກດາວິດ.

13 ແລະ ດາວິດໄດ້ກ່າວກັບນາທານວ່າ ຂ້າພະເຈົ້າໄດ້ເຮັດບາບຕໍ່ພຣະຜູ້ເປັນເຈົ້າ. ແລະ ນາທານໄດ້ກ່າວກັບດາວິດວ່າ ພຣະຜູ້ເປັນເຈົ້າຍັງບໍ່ໄດ້ເອົາບາບໄປຈາກທ່ານ *ສະນັ້ນ*ທ່ານຈະບໍ່ຕາຍ.

**ປຈສ, 1 ຂ່າວຄາວ 21:15.** ປຽບທຽບໃສ່ກັບ 1 ຂ່າວຄາວ 21:15

ພຣະເຈົ້າຢຸດຢັ້ງທູດບໍ່ໃຫ້ທຳລາຍເຢຣູຊາເລັມ.

15 ແລະ ພຣະເຈົ້າໄດ້ສົ່ງທູດມາເພື່ອໃຫ້ທຳລາຍເຢຣູຊາເລັມ. *ແລະ ທູດໄດ້ເດ່ມືອອກໄປທາງເຢຣູຊາເລັມ ເພື່ອຈະທຳລາຍມັນ; ແລະ ພຣະເຈົ້າໄດ້ສັ່ງທູດວ່າ, ຢຸດ, ຊ່ຳນີ້ກໍພໍແລ້ວ; ເພາະ*ໃນຂະນະທີ່ ເພິ່ນກຳລັງຈະທຳລາຍ, ພຣະຜູ້ເປັນເຈົ້າໄດ້ທອດພຣະເນດເບິ່ງ*ອິດສະຣາເອນ, ວ່າ*ພຣະອົງໄດ້ປ່ຽນພຣະໄທ; *ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງໄດ້ຢຸດຢັ້ງ*ທູດ ບໍ່ໃຫ້ທຳລາຍ, *ໃນຂະນະທີ່ເພິ່ນ*ກຳລັງຢືນຢູ່ໃກ້ລານຟາດເຂົ້າຂອງອາໂຣນາ, ຊາວເຢບຸດ.

**ປຈສ, 2 ຂ່າວຄາວ 18:22.** ປຽບທຽບໃສ່ກັບ 2 ຂ່າວຄາວ 18:22

ພຣະຜູ້ເປັນເຈົ້າບໍ່ໄດ້ວາງວິນຍານເທັດໄວ້ໃນປາກຂອງສາດສະດາ.

22 ບັດນີ້ ສະນັ້ນ, ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້*ພົບເຫັນ*ວິນຍານເທັດໃນປາກຂອງສາດສະດາຂອງທ່ານ, ແລະ ພຣະຜູ້ເປັນເຈົ້າໄດ້ກ່າວບໍ່ດີຕໍ່ຕ້ານທ່ານ.

**ປຈສ, ເພງສັນລະເສີນ 11:1–5.**

ປຽບທຽບໃສ່ກັບ ເພງສັນລະເສີນ 11:1–5

ໃນຍຸກສຸດທ້າຍ ຄົນຊອບທຳຈະໜີໄປລີ້ທີ່ພູເຂົາຂອງພຣະຜູ້ເປັນເຈົ້າ. ເມື່ອພຣະຜູ້ເປັນເຈົ້າສະເດັດມາ, ພຣະອົງຈະທຳລາຍຄົນຊົ່ວ ແລະ ໄຖ່ຄົນຊອບທຳ.

1 *ໃນມື້ນັ້ນ ພຣະອົງຈະສະເດັດມາ, ໂອ້ພຣະຜູ້ເປັນເຈົ້າ; ແລະ ຂ້ານ້ອຍຈະໄວ້ວາງໃຈໃນພຣະອົງ. ພຣະອົງຈະບອກຜູ້ຄົນຂອງພຣະອົງ, ເພາະຫູຂອງຂ້ານ້ອຍໄດ້ຍິນສຸລະສຽງຂອງພຣະອົງ; ພຣະອົງຈະກ່າວແກ່ທຸກຄົນວ່າ,* ຈົ່ງໜີໄປລີ້ທີ່ພູເຂົາ*ຂອງເຮົາ; ແລະ ຄົນຊອບທຳຈະໜີໄປລີ້ເໝືອນດັ່ງນົກ ທີ່ຖືກປ່ອຍອອກຈາກແຮ້ວຂອງນາຍພານ.*

2 ເພາະ ຄົນ ຊົ່ວ ໄດ້ກົ່ງໜ້າທະນູ; ເບິ່ງເຖີດ, ພວກເຂົາພ້ອມທີ່ຈະຍິງລູກສອນ, ໄປໃສ່ຄົນຊອບທຳຈາກບ່ອນມືດ, *ເພື່ອທຳລາຍຮາກຖານຂອງພວກເຂົາ.*

3 *ແຕ່* ຮາກຖານຂອງ*ຄົນຊົ່ວ*ຈະຖືກທຳລາຍ, *ແລະ ພວກເຂົາ*ສາມາດເຮັດຫຍັງໄດ້ແດ່?

4 *ເພາະ*ພຣະຜູ້ເປັນເຈົ້າ, *ເມື່ອພຣະອົງສະເດັດມາ*ຍັງພຣະວິຫານທີ່ສັກສິດຂອງພຣະອົງ, *ປະທັບເທິງ*ພຣະບັນລັງ*ຂອງພຣະເຈົ້າ*ຢູ່ເທິງຟ້າສະຫວັນ, ພຣະອົງຈະເຝົ້າເບິ່ງ*ຄົນຊົ່ວ.*

5 ພຣະອົງຈະເຝົ້າເບິ່ງລູກຫລານມະນຸດ, *ແລະ ພຣະອົງ ຈະໄຖ່ຄົນຊອບທຳ, ແລະ ພວກເຂົາ ຈະຖືກທົດສອບ.* ພຣະຜູ້ເປັນເຈົ້າ*ຮັກ*ຄົນຊອບທຳ, ແຕ່ພຣະອົງກຽດຊັງຄົນທີ່ເຮັດການໂຫດຮ້າຍ.

**ປຈສ, ເພງສັນລະເສີນ 14:1–7.**

ປຽບທຽບໃສ່ກັບ ເພງສັນລະເສີນ 14:1–7

ຜູ້ຂຽນເພງສັນລະເສີນເຫັນຄວາມຈິງທີ່ສູນເສຍໄປໃນຍຸກສຸດທ້າຍ ແລະ ຄອງຄອຍການສ້າງຕັ້ງຂອງຊີໂອນ.

1 ຄົນ ໂງ່ກ່າວ ໃນ ໃຈ ຂອງ ເຂົາ ວ່າ *ບໍ່ມີມະນຸດ ຄົນ ໃດ ໄດ້ ເຫັນ ພຣະເຈົ້າ. ເພາະພຣະອົງບໍ່ສະແດງຕົນເອງຕໍ່ເຮົາ, ສະນັ້ນ* ຈຶ່ງບໍ່ມີພຣະເຈົ້າ. *ຈົ່ງເບິ່ງ,* ພວກເຂົາເສື່ອມຊາມ; ພວກເຂົາໄດ້ເຮັດວຽກງານທີ່ໜ້າກຽດຊັງ, *ແລະ ບໍ່ມີຄົນໃດໃນພວກເຂົາທີ່ເຮັດສິ່ງດີ.*

2 *ເພາະ*ພຣະຜູ້ເປັນເຈົ້າໄດ້ຫລຽວລົງມາຈາກສະຫວັນເບິ່ງລູກຫລານມະນຸດ, *ແລະ ໂດຍສຸລະສຽງຂອງພຣະອົງ, ພຣະອົງໄດ້ກ່າວກັບຜູ້ຮັບໃຊ້ຂອງພຣະອົງວ່າ ເຈົ້າຈົ່ງຊອກຫາໃນບັນດາລູກຫລານມະນຸດ* ວ່າມີຄົນໃດແດ່ທີ່ເຂົ້າໃຈພຣະເຈົ້າ. *ແລະ ລາວໄດ້ເປີດປາກກ່າວກັບພຣະຜູ້ເປັນເຈົ້າວ່າ, ຈົ່ງເບິ່ງ, ຄົນທັງປວງເຫລົ່ານີ້ ກ່າວວ່າພວກເຂົາເປັນຂອງພຣະອົງ.*

3 *ພຣະຜູ້ເປັນເຈົ້າໄດ້ຕອບ, ແລະ ກ່າວວ່າ,* ພວກເຂົາທັງໝົດໄດ້ຫລົງທາງໄປແລ້ວ, ພວກເຂົາໄດ້ພາກັນເປັນຄົນສົກກະປົກ, *ເຈົ້າບໍ່ສາມາດຫລຽວເຫັນ*ຄົນໃດ*ໃນບັນດາພວກເຂົາທີ່ເຮັດຄວາມດີ,* ບໍ່ເລີຍ, ບໍ່ມີແມ່ນແຕ່ຈັກຄົນ.

4 *ທັງໝົດທີ່ພວກເຂົາມີເພື່ອເປັນຄູສອນຂອງພວກເຂົາ*ແມ່ນຜູ້ທີ່ເຮັດຄວາມຊົ່ວຮ້າຍ, *ແລະ ຄູສອນຂອງພວກເຂົາ*ບໍ່ມີຄວາມຮູ້. *ພວກເຂົາເປັນ*ຄົນທີ່ລ້າງຜານຜູ້ຄົນຂອງເຮົາ. ພວກເຂົາກິນອາຫານ ແລະ ບໍ່ເຄີຍອະທິຖານຫາພຣະຜູ້ເປັນເຈົ້າຈັກເທື່ອ.

5 ພວກ ເຂົາ*ຢູ່*ໃນ ຄວາມ ຢ້ານ ກົວ ຢ່າງໃຫຍ່ຫລວງ, ເພາະພຣະເຈົ້າ*ປະທັບຢູ່*ໃນລຸ້ນຄົນທີ່ຊອບທຳ. *ພຣະອົງເປັນຜູ້ປຶກສາຂອງຄົນຍາກຈົນ, ເພາະພວກເຂົາອັບອາຍເນື່ອງດ້ວຍຄົນຊົ່ວ, ແລະ ໜີມາຫາພຣະ*

*ຜູ້ເປັນເຈົ້າ, ເພື່ອເປັນບ່ອນຫລົບໄພຂອງ
ພວກເຂົາ.*

6 *ພວກເຂົາອັບອາຍ*ໃນຄຳປຶກສາຂອງ
ຄົນຍາກຈົນ ເພາະພຣະຜູ້ເປັນເຈົ້າເປັນ
ບ່ອນຫລົບໄພຂອງພວກເຂົາ.

7 ໂອ້ *ເພື່ອວ່າຊີໂອນຈະຖືກສ້າງຕັ້ງຂຶ້ນ
ຈາກສະຫວັນ,* ຄວາມ ລອດ ຂອງອິດສະ
ຣາເອນ. *ໂອ້ພຣະຜູ້ເປັນເຈົ້າ, ເມື່ອໃດພຣະ
ອົງຈະສ້າງຕັ້ງຊີໂອນຂຶ້ນ?* ເມື່ອພຣະຜູ້ເປັນ
ເຈົ້ານຳການເປັນຊະເລີຍຂອງຜູ້ຄົນຂອງ
ພຣະອົງກັບຄືນມາ, ຢາໂຄບຈະປິຕິຍິນດີ,
ອິດສະຣາເອນຈະຍິນດີ.

**ປຈສ, ເພງສັນລະເສີນ 24:7–10.**
ປຽບທຽບໃສ່ກັບ ເພງສັນລະເສີນ
24:7–10

ພຣະເຈົ້າແຫ່ງຄວາມມີໄຊຈະໄຖ່ຜູ້ຄົນຂອງພຣະອົງ
ເວລາພຣະອົງສະເດັດມາ.

7 ຈົ່ງເງີຍໜ້າຂຶ້ນ, ໂອ້ ເຈົ້າ*ຫລາຍລຸ້ນຄົນ
ຂອງຢາໂຄບ;* ແລະ ຈົ່ງເງີຍໜ້າຂຶ້ນເຖີດ;
*ແລະ* ພຣະຜູ້ເປັນເຈົ້າມີລິດທານຸພາບ ແລະ
ເຂັ້ມແຂງ; ພຣະຜູ້ເປັນເຈົ້າມີໄຊໃນສະ
ໜາມຮົບ, ຜູ້ເປັນພຣະເຈົ້າແຫ່ງຄວາມມີ
ໄຊ, *ຈະສະຖາປະນາເຈົ້າຕະຫລອດການ.*

8 *ແລະ ພຣະອົງຈະເປີດປະຕູສະຫວັນ;
ແລະ ຈະສະເດັດລົງມາເພື່ອໄຖ່ຜູ້ຄົນຂອງ
ພຣະອົງ; ເພື່ອເຮັດໃຫ້ເຈົ້າມີນາມອັນເປັນ
ນິດ; ເພື່ອສະຖາປະນາເຈົ້າໄວ້ເທິງດານຫີນ
ອັນເປັນນິດຂອງພຣະອົງ.*

9 ຈົ່ງ ເງີຍ ໜ້າຂຶ້ນ, ໂອ້ ເຈົ້າ*ຫລາຍລຸ້ນ
ຄົນຂອງຢາໂຄບ; ຈົ່ງເງີຍໜ້າຂຶ້ນ*ເຖີດ,
ເຈົ້າ*ຫລາຍລຸ້ນຄົນ*ອັນເປັນນິດ, ແລະ *ຈອມ
ໂຍທາ, ແລະ ມະຫາກະສັດຂອງບັນດາ
ກະສັດທັງຫລາຍ;*

10 *ແມ່ນແຕ່*ພຣະເຈົ້າແຫ່ງຄວາມມີໄຊ
ຈະສະເດັດ*ມາຫາເຈົ້າ; ແລະ ຈະໄຖ່ຜູ້ຄົນ
ຂອງພຣະອົງ, ແລະ ຈະສະຖາປະນາພວກ
ເຂົາໃນຄວາມຊອບທຳ.* ເສລາ.

**ປຈສ, ເພງສັນລະເສີນ 109:4.** ປຽບທຽບ
ໃສ່ກັບ ເພງສັນລະເສີນ 109:4

ພວກເຮົາຕ້ອງອະທິຖານເພື່ອຜູ້ປໍລະປັກຂອງເຮົາ.

4 *ແລະ, ທັງໆ ທີ່*ມີຄວາມຮັກຂອງຂ້າ
ນ້ອຍ, ພວກເຂົາຍັງເປັນຜູ້ປໍລະປັກຂອງຂ້າ
ນ້ອຍ; *ແຕ່*ຂ້ານ້ອຍຈະອະທິຖານ*ເພື່ອພວກ
ເຂົາສະເໝີໄປ.*

**ປຈສ, ເອຊາຢາ 29:1–8.** ປຽບທຽບໃສ່
ກັບ ເອຊາຢາ 29:1–8

ຂ່າວສານທີ່ເຄີຍສັ່ງສອນໃນເຢຣູຊາເລັມ ໂດຍສາດ
ສະດາໃນສະໄໝບູຮານ ຈະຖືກນຳມາສັ່ງສອນໃນ
ຍຸກສຸດທ້າຍ ຈາກພຣະຄຳພີມໍມອນ, ຊຶ່ງຂຶ້ນ "ມາ
ຈາກພື້ນດິນ."

1 ວິບັດແກ່ອາຣີເອນ, ອາຣີເອນ, ນະຄອນ
ຊຶ່ງດາວິດໄດ້ຕັ້ງຄ້າຍໃສ່! ຈົ່ງເພີ່ມປີເຂົ້າກັບປີ;
ຈົ່ງໃຫ້ມີການຖວາຍເຄື່ອງບູຊາ.

2 ເຮົາຍັງຈະໃຫ້ອາຣີເອນທຸກໃຈ, ແລະ
ຈະມີການຮ້ອງຄໍ່າຄວນ ແລະ ໂສກເສົ້າ;
*ເພາະພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນັ້ນແກ່
ຂ້າພະເຈົ້າ,* ມັນຈະເປັນອາຣີເອນແກ່ເຮົາ;

3 *ວ່າ*ເຮົາ *ພຣະຜູ້ເປັນເຈົ້າ*ຈະຕັ້ງຄ້າຍ
ຢູ່ອ້ອມຮອບ *ນະຄອນ,* ແລະ ຈະລ້ອມ
*ນະຄອນ*ກັບທໍຮົບ, ແລະ ເຮົາຈະຍົກທັບມາ
ໂຈມຕີ*ນະຄອນ.*

4 ແລະ *ນະຄອນ*ຈະຖືກຢຽບລົງ, ແລະ
ຈະເວົ້າອອກມາຈາກພື້ນດິນ, ແລະ ສຽງ
*ຂອງນະຄອນ*ຈະດັງມາຈາກທີ່ຕໍ່າໃນຂີ້
ຝຸ່ນດິນ; ແລະ ສຽງ*ຂອງນະຄອນ*ຈະເປັນ
ເໝືອນດັ່ງວິນຍານ, ຂຶ້ນມາຈາກພື້ນດິນ,
ແລະ ສຽງ*ຂອງນະຄອນ*ຈະດັງອຸດອິດອອກ
ຈາກຂີ້ຝຸ່ນດິນ.

5 ຍິ່ງ ໄປ ກວ່າ ນັ້ນ ຄົນ ຕ່າງ ດ້າວ*ຂອງ
ນະຄອນ* ຈະຖືກລົມພັດໄປດັ່ງຂີ້ຝຸ່ນດິນ,

ແລະ ກອງທັບອັນໜ້າຢ້ານກົວຂອງພວກເຂົາ ກໍຈະບິນເຈີດໜີດັ່ງເຟືອງ; ແທ້ຈິງແລ້ວ, ຈະເປັນໃນທັນໃດ ຢ່າງບໍ່ຄາດຝັນ.

6 *ເພາະ*ຈອມໂຍທາຈະສະເດັດມາຢ້ຽມຢາມ*ພວກເຂົາ*ດ້ວຍສຽງຟ້າຮ້ອງ, ແລະ ດ້ວຍແຜ່ນດິນໄຫວ, ແລະ ດ້ວຍສຽງດັງກ້ອງ, ດ້ວຍລົມພະຍຸ ແລະ ສຽງຝົນຟ້າຄະນອງ, ແລະ ແປວໄຟອັນແກ່ກ້າ.

7 ແລະ ກອງທັບທັງໝົດຂອງປະຊາຊາດຕ່າງໆ ທີ່ພວມໂຈມຕີອາຣີເອນ, ແມ່ນແຕ່ກອງທັບທັງໝົດທີ່ໂຈມຕີນະຄອນ ແລະ ອາວຸດຍຸດທະພັນຂອງນະຄອນ, ແລະ ເຮັດໃຫ້ນະຄອນທຸກໃຈ, ຈະສູນຫາຍໄປດັ່ງຄວາມຝັນໃນຕອນກາງຄືນ.

8 *ແທ້ຈິງແລ້ວ, ພວກເຂົາຈະເປັນ*ດັ່ງຄົນກຳລັງຈະຕາຍເພາະຫິວເຂົ້າ *ທີ່ຝັນໄປ*, ແລະ ຈົ່ງເບິ່ງ, ເຂົາໄດ້ກິນເຂົ້າ, ແຕ່ເມື່ອເຂົາຕື່ນນອນ ຈິດວິນຍານຂອງເຂົາຫິວໂຫຍ; ຫລື *ເປັນດັ່ງ*ຄົນພວມຈະຕາຍຍ້ອນກະຫາຍນ້ຳ *ທີ່*ໄດ້ຝັນໄປ, ແລະ ຈົ່ງເບິ່ງ, ເຂົາໄດ້ດື່ມນ້ຳ, ແຕ່ເມື່ອເຂົາຕື່ນນອນ, ແລະ ຈົ່ງເບິ່ງ, ເຂົາອ່ອນເພຍ, ແລະ ຈິດວິນຍານຂອງເຂົາຍັງກະຫາຍ. *ແທ້ຈິງແລ້ວ, ຈະເປັນເຊັ່ນນັ້ນ* ກັບກອງທັບທັງໝົດຂອງປະຊາຊາດຕ່າງໆ ທີ່ມາໂຈມຕີຊີໂອນ.

**ປຈສ, ເອຊາຢາ 42:19–23.** ປຽບທຽບໃສ່ກັບ ເອຊາຢາ 42:19–22

ພຣະຜູ້ເປັນເຈົ້າສົ່ງຜູ້ຮັບໃຊ້ຂອງພຣະອົງໄປສອນຄົນທີ່ບໍ່ເລືອກເບິ່ງ ຫລື ຟັງຄວາມຈິງ; ຄົນທີ່ຟັງ ແລະ ເຊື່ອຟັງ ຈະຖືກເຮັດໃຫ້ດີພ້ອມທຸກຢ່າງ.

19 *ເພາະເຮົາຈະສົ່ງຜູ້ຮັບໃຊ້ຂອງເຮົາໄປໃຫ້ເຈົ້າຜູ້ຕາບອດ; ແທ້ຈິງແລ້ວ, ຜູ້ສົ່ງຂ່າວເພື່ອເປີດຕາຂອງຄົນຕາບອດ, ແລະ ເປີດຫູຂອງຄົນຫູໜວກ;*

20 *ແລະ ພວກເຂົາຈະຖືກເຮັດໃຫ້ດີພ້ອມທຸກຢ່າງ ເຖິງແມ່ນຕາຂອງພວກເຂົາຈະບອດກໍຕາມ, ຖ້າພວກເຂົາຈະຍອມເຊື່ອຟັງຜູ້ສົ່ງຂ່າວ,* ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ.

21 *ພວກເຈົ້າເປັນຜູ້ຄົນກຸ່ມໜຶ່ງ,* ເຫັນຫລາຍສິ່ງ, ແຕ່ພວກເຈົ້າບໍ່ສັງເກດ; ເປີດ*ຫູຟັງ, ແຕ່ພວກເຈົ້າ*ບໍ່ໄດ້ຍິນ.

22 ພຣະຜູ້ເປັນເຈົ້າ*ບໍ່*ພໍພຣະໄທຫລາຍ*ກັບຜູ້ຄົນເຊັ່ນນັ້ນ, ແຕ່*ເພາະເຫັນແກ່ຄວາມຊອບທຳຂອງພຣະອົງ, ພຣະອົງຈະຂະຫຍາຍກົດ ແລະ ເຮັດໃຫ້ມັນເປັນທີ່ເຄົາລົບ.

23 *ພວກເຈົ້າ*ເປັນຜູ້ຄົນກຸ່ມໜຶ່ງທີ່ຖືກຂະໂມຍ ແລະ ຖືກປຸ້ນ; *ສັດຕູຂອງພວກເຈົ້າ,* ພວກເຂົາທັງໝົດ, *ໄດ້*ດັກຈັບ*ພວກເຈົ້າ*ໄວ້ໃນຫລຸມ, ແລະ ພວກເຂົາ*ໄດ້ເຊື່ອງພວກເຈົ້າ*ໄວ້ໃນຄຸກ; *ພວກເຂົາໄດ້ເອົາພວກເຈົ້າ*ໄປເປັນເຫຍື່ອ; ແລະ ບໍ່ມີໃຜຖືກປົດປ່ອຍ; ເປັນຊັບທີ່ຖືກປຸ້ນ ແລະ ບໍ່ມີໃຜເວົ້າວ່າ, ຈົ່ງນຳມັນຄືນມາ.

**ປຈສ, ເຢເຣມີຢາ 26:13.** ປຽບທຽບໃສ່ກັບ ເຢເຣມີຢາ 26:13

ພຣະຜູ້ເປັນເຈົ້າບໍ່ຕ້ອງກັບພຣະໄທ; ມະນຸດຕ້ອງກັບໃຈ.

13 ສະນັ້ນ ບັດນີ້, ຈົ່ງແກ້ໄຂວິທີທາງ ແລະ ການກະທຳຂອງພວກເຈົ້າ, ແລະ ເຊື່ອຟັງສຸລະສຽງຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ, *ແລະ ກັບໃຈ,* ແລະ ພຣະຜູ້ເປັນເຈົ້າຈະ*ເວັ້ນໂທດ*ທີ່ພຣະອົງໄດ້ປະກາດແກ່ເຈົ້າ.

**ປຈສ, ອາໂມດ 7:3.** ປຽບທຽບໃສ່ກັບ ອາໂມດ 7:3

ພຣະຜູ້ເປັນເຈົ້າບໍ່ຕ້ອງກັບພຣະໄທ; ມະນຸດຕ້ອງກັບໃຈ.

3 *ແລະ* ພຣະຜູ້ເປັນເຈົ້າ*ໄດ້ກ່າວ, ກ່ຽວ*

*ກັບຢາໂຄບວ່າ, ຢາໂຄບຈະກັບໃຈກ່ຽວກັບ ເລື່ອງນີ້, ສະນັ້ນ ເຮົາຈະບໍ່ທຳລາຍລາວຈົນ ໝົດສິ້ນ,* ພຣະຜູ້ເປັນເຈົ້າກ່າວ.

**ປຈສ, ມັດທາຍ 3:4–6.** ປຽບທຽບໃສ່ກັບ ມັດທາຍ 2:4–6

ສາດສະດາໄດ້ບອກລ່ວງໜ້າວ່າ ເບັດເລເຮັມຈະເປັນສະຖານທີ່ເກີດຂອງພຣະເມຊີອາ.

4 ແລະ ເມື່ອເພິ່ນໄດ້ເອີ້ນພວກຫົວໜ້າ ປະໂລຫິດ, ແລະ ພວກທຳມະຈານທັງໝົດ ມາເຕົ້າໂຮມກັນ, ແລ້ວເພິ່ນກໍໄດ້ຖາມພວກ ເຂົາ*ວ່າ, ສະຖານທີ່ ຊຶ່ງໄດ້ຖືກຂຽນໄວ້ໂດຍ ສາດສະດາ, ບ່ອນທີ່*ພຣະຄຣິດຈະມາເກີດ ນັ້ນ ຢູ່ທີ່ໃດ? *ເພາະເພິ່ນມີຄວາມຢ້ານກົວ ຫລາຍ, ແຕ່ເພິ່ນບໍ່ເຊື່ອຖ້ອຍຄຳຂອງສາດ ສະດາ.*

5 ແລະ ພວກເຂົາໄດ້ຕອບເພິ່ນວ່າ, *ມີ ຂຽນໄວ້ໂດຍສາດສະດາ, ວ່າພຣະອົງ ຈະເກີດ*ຢູ່ໃນເມືອງເບັດເລເຮັມ ແຂວງ ຢູດາຍ, ເພາະ*ພວກເພິ່ນໄດ້ກ່າວດັ່ງນັ້ນ,*

6 *ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາ ເຖິງເຮົາ, ກ່າວວ່າ,* ແລະ ເບັດເລເຮັມ *ຊຶ່ງ ຕັ້ງຢູ່*ໃນດິນແດນຢູດາຍເອີຍ, *ໂດຍທາງ ເຈົ້າ ກຸມມານນ້ອຍຈະເກີດມາ, ຊຶ່ງ* ເຈົ້າກໍ ບໍ່ແມ່ນຜູ້ເລັກນ້ອຍທີ່ສຸດ ໃນບັນດາເມືອງ ໃຫຍ່ໆຂອງຢູດາຍ; ເພາະ*ພຣະເມຊີອາ*ຈະ ມາຈາກເຈົ້າ, ຜູ້ຈະ *ໂຜດ*ຊາວອິດສະຣາເອນ ຜູ້ຄົນຂອງເຮົາ.

**ປຈສ, ມັດທາຍ 3:24–26.** ປຽບທຽບໃສ່ ກັບ ມັດທາຍ 2:23

ພຣະເຢຊູເຕີບໂຕຂຶ້ນ ແລະ ເຝົ້າລໍພຣະຜູ້ເປັນເຈົ້າ ກ່ອນເລີ່ມຕົ້ນການປະຕິບັດສາດສະໜາກິດຂອງ ພຣະອົງ.

24 *ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະ ເຢຊູໄດ້ເຕີບໂຕຂຶ້ນ ພ້ອມກັບພີ່ນ້ອງຂອງ ພຣະອົງ, ແລະ ເຂັ້ມແຂງ, ແລະ ເຝົ້າລໍພຣະ ຜູ້ເປັນເຈົ້າ ສຳລັບເວລາຂອງການປະຕິບັດ ສາດສະໜາກິດຂອງພຣະອົງ ຈະມາເຖິງ.*

25 *ແລະ ພຣະອົງໄດ້ຮັບໃຊ້ພາຍໃຕ້ພຣະ ບິດາຂອງພຣະອົງ, ແລະ ພຣະອົງບໍ່ໄດ້ ກ່າວດັ່ງມະນຸດຄົນອື່ນໆ, ທັງພຣະອົງບໍ່ສາ ມາດຮັບການສິດສອນໄດ້; ເພາະພຣະອົງບໍ່ ຈຳເປັນໃຫ້ມະນຸດຄົນໃດມາສອນພຣະອົງ.*

26 *ແລະ ຫລັງຈາກຫລາຍປີຜ່ານໄປ, ເວລາແຫ່ງການປະຕິບັດສາດສະໜາກິດ ຂອງພຣະອົງກໍໃກ້ຈະມາເຖິງແລ້ວ.*

**ປຈສ, ມັດທາຍ 3:34–36.** ປຽບທຽບໃສ່ ກັບ ມັດທາຍ 3:8–9

ຜູ້ທີ່ໄດ້ປະຕິເສດຂ່າວສານຂອງໂຢຮັນ ບັບຕິສະໂຕ ໄດ້ປະຕິເສດພຣະຄຣິດ. ພຣະເຈົ້າສາມາດເຮັດໃຫ້ ຜູ້ທີ່ບໍ່ໄດ້ເປັນຊາວອິດສະຣາເອນ ເປັນຜູ້ຄົນແຫ່ງ ພັນທະສັນຍາໄດ້.

34 *ດ້ວຍເຫດໃດ ເຈົ້າຈຶ່ງບໍ່ຮັບເອົາຄຳ ສັ່ງສອນຂອງຜູ້ທີ່ພຣະເຈົ້າໄດ້ສົ່ງມາ? ຖ້າ ຫາກເຈົ້າບໍ່ຮັບເອົາສິ່ງນີ້ໄວ້ໃນໃຈ, ເຈົ້າກໍ ບໍ່ໄດ້ຮັບເອົາເຮົາ; ແລະ ຖ້າຫາກເຈົ້າບໍ່ໄດ້ ຮັບເອົາເຮົາ, ເຈົ້າກໍບໍ່ໄດ້ຮັບເອົາຄົນທີ່ເຮົາ ໄດ້ສົ່ງໄປໃຫ້ຖ້ອຍຄຳ; ແລະ ເປັນເພາະ ຄວາມຜິດບາບຂອງເຈົ້າ, ເຈົ້າຈຶ່ງບໍ່ມີເສື້ອ ຊັ້ນນອກ.*

35 *ສະນັ້ນ, ຈົ່ງກັບໃຈ, ແລະ* ເຮັດໃຫ້ໄດ້ ຜົນສົມກັບວ່າ ພວກເຈົ້າໄດ້ກັບໃຈ;

36 ແລະ ຢ່າຄິດໃນໃຈວ່າ, *ພວກເຮົາ ເປັນລູກຫລານຂອງອັບຣາຮາມ, ແລະ ພວກເຮົາເທົ່ານັ້ນທີ່ມີອຳນາດທີ່ຈະນຳລູກ ຫລານມາໃຫ້ອັບຣາຮາມ ບັນພະບຸລຸດ ຂອງພວກເຮົາ;* ເພາະຂ້າພະເຈົ້າກ່າວກັບ ພວກເຈົ້າວ່າ ພຣະເຈົ້າສາມາດບັນດານ ໃຫ້ກ້ອນຫີນເຫລົ່ານີ້*ເປັນ*ລູກຫລານຂອງ ອັບຣາຮາມໄດ້.

**ປຈສ, ມັດທາຍ 3:38–40.** ປຽບທຽບໃສ່ກັບ ມັດທາຍ 3:11–12

ໂຢຮັນບັບຕິສະໂຕ ເປັນພະຍານວ່າ ພຣະເຢຊູມີອຳນາດທີ່ຈະໃຫ້ບັບຕິສະມາດ້ວຍພຣະວິນຍານບໍລິສຸດ ແລະ ດ້ວຍໄຟ.

38 ຂ້າພະເຈົ້າໃຫ້ບັບຕິສະມາພວກເຈົ້າດ້ວຍນ້ຳ, *ຕາມ* ການກັບໃຈຂອງພວກເຈົ້າ; *ແລະ ເມື່ອຜູ້ທີ່ ຂ້າພະເຈົ້າ ໄດ້ກ່າວເປັນພະຍານສະເດັດມາ, ຜູ້ທີ່* ມີລິດເດດກວ່າຂ້າພະເຈົ້າ, ຊຶ່ງຂ້າພະເຈົ້າບໍ່ສົມຄວນຈະຈັບແມ່ນແຕ່ເກີບຂອງພຣະອົງ, *(ຫລື ຜູ້ມີຕຳແໜ່ງທີ່ຂ້າພະເຈົ້າບໍ່ສາມາດເຮັດແທນໄດ້,) ດັ່ງທີ່ຂ້າພະເຈົ້າໄດ້ກ່າວມານັ້ນ, ຂ້າພະເຈົ້າໃຫ້ບັບຕິສະມາພວກເຈົ້າກ່ອນພຣະອົງຈະສະເດັດມາແທ້ໆ, ວ່າເມື່ອພຣະອົງສະເດັດມາ ພຣະອົງຈະ* ໃຫ້ພວກເຈົ້າຮັບບັບຕິສະມາດ້ວຍພຣະວິນຍານບໍລິສຸດ ແລະ ດ້ວຍໄຟ.

39 *ແລະ ພຣະອົງເປັນຜູ້ທີ່ຂ້າພະເຈົ້າຈະກ່າວເປັນພະຍານ,* ຊຶ່ງພຣະຫັດຂອງພຣະອົງຈະຖືກະດົ້ງຝັດເຂົ້າ, ແລະ ພຣະອົງຈະເຮັດລານເຂົ້າໃຫ້ກ້ຽງດີ, ແລະ ຮວບຮວມເອົາເຂົ້າເມັດດີໄວ້ໃນເລົ້າ; ແຕ່ *ໃນຄວາມສົມບູນແຫ່ງເວລາຂອງພຣະອົງເອງ,* ພຣະອົງຈະເຜົາເຂົ້າເມັດລີບດ້ວຍໄຟທີ່ໄໝ້ຢູ່ຕະຫລອດໄປ.

40 *ດັ່ງນັ້ນ ໂຢຮັນຈຶ່ງໄດ້ມາ, ໄດ້ສັ່ງສອນ ແລະ ໃຫ້ບັບຕິສະມາ ຢູ່ໃນແມ່ນ້ຳຈໍແດນ; ໄດ້ກ່າວເປັນພະຍານ, ວ່າຜູ້ທີ່ຈະສະເດັດມາພາຍຫລັງເພິ່ນ ມີອຳນາດທີ່ຈະໃຫ້ບັບຕິສະມາດ້ວຍພຣະວິນຍານບໍລິສຸດ ແລະ ດ້ວຍໄຟ.*

**ປຈສ, ມັດທາຍ 3:43–46.** ປຽບທຽບໃສ່ກັບ ມັດທາຍ 3:15–17

ໂຢຮັນໃຫ້ບັບຕິສະມາແກ່ພຣະເຢຊູໂດຍການລົງໄປໃນນ້ຳໝົດທັງຕົວ, ເຫັນພຣະວິນຍານບໍລິສຸດເໝືອນດັ່ງນົກເຂົາລົງມາ, ແລະ ໄດ້ຍິນສຸລະສຽງຂອງພຣະບິດາ.

43 ແລະ ພຣະເຢຊູ, ໄດ້ຕອບລາວວ່າ, ຈົ່ງຍອມ*ໃຫ້ເຮົາຮັບບັບຕິສະມາຈາກເຈົ້າ,* ເພາະດ້ວຍເຫດນີ້ ພວກເຮົາຈຶ່ງເຮັດໃຫ້ຄວາມຊອບທຳທັງໝົດສຳເລັດ. ແລ້ວລາວຈຶ່ງຍອມຕໍ່ພຣະອົງ.

44 *ແລະ ໂຢຮັນໄດ້ລົງໄປຢືນຢູ່ໃນນ້ຳ ແລະ ໃຫ້ບັບຕິສະມາແກ່ພຣະອົງ.*

45 ແລະ ເມື່ອພຣະເຢຊູໄດ້ຮັບບັບຕິສະມາແລ້ວ, ກໍໄດ້ຂຶ້ນຈາກນ້ຳທັນທີ; *ແລະ ໂຢຮັນໄດ້ເຫັນ,* ແລະ ແລ້ວ, ສະຫວັນໄດ້ເປີດອອກແກ່ລາວ, ແລະ ລາວໄດ້ເຫັນພຣະວິນຍານຂອງພຣະເຈົ້າເໝືອນດັ່ງນົກເຂົາລົງມາ*ຢູ່ເທິງພຣະເຢຊູ.*

46 ແລະ ແລ້ວ, *ລາວ ໄດ້ຍິນ ສຽງ*ຈາກສະຫວັນ, ກ່າວວ່າ, ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ, ຜູ້ເຮົາພໍໃຈຫລາຍ. *ຈົ່ງຟັງທ່ານ.*

**ປຈສ, ມັດທາຍ 4:1, 5–6, 8–9.** ປຽບທຽບໃສ່ກັບ ມັດທາຍ 4:1, 5–6, 8–9; ມີການປ່ຽນແປງທີ່ຄ້າຍຄືກັນ ໃນ ລູກາ 4:2, 5–11

ພຣະເຢຊູຖືກນຳພາໂດຍພຣະວິນຍານ, ບໍ່ແມ່ນໂດຍຊາຕານ.

1 ຈາກນັ້ນ ພຣະວິນຍານ ໄດ້ ນຳ*ພຣະເຢຊູໄປ,* ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ, *ເພື່ອໄປຢູ່ກັບພຣະເຈົ້າ.*

5 ຈາກນັ້ນ *ພຣະເຢຊູໄດ້ຖືກນຳໄປ*ຍັງນະຄອນສັກສິດ, ແລະ *ພຣະວິນຍານ*ໄດ້ໃຫ້ພຣະອົງຢືນຢູ່ເທິງຍອດພຣະວິຫານ.

6 *ຈາກນັ້ນ ມານໄດ້ມາຫາພຣະອົງ ແລະ ເວົ້າວ່າ,* ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ, ຈົ່ງໂດດລົງໄປ, ເພາະມີຄຳຂຽນໄວ້ວ່າພຣະອົງຈະສັ່ງເຫລົ່າທູດເຖິງເລື່ອງທ່ານ,

ແລະ ພວກເພິ່ນຈະໃຊ້ມືຂອງພວກເພິ່ນອູ້ມທ່ານໄວ້, ເຖິງແມ່ນແຕ່ຕີນຂອງທ່ານ ກໍຈະບໍ່ໄດ້ຖືກກ້ອນຫີນ.

8 *ແລະ ອີກເທື່ອໜຶ່ງ, ພຣະເຢຊູໄດ້ຖືກນຳໄປໂດຍພຣະວິນຍານ, ແລະ ພຣະວິນຍານ* ໄດ້ພາພຣະອົງຂຶ້ນໄປເທິງຍອດພູທີ່ສູງສຸດແຫ່ງໜຶ່ງ, ແລະ ໄດ້ສະແດງບັນດາອານາຈັກແຫ່ງໂລກ ກັບຄວາມຍິ່ງໃຫຍ່ທັງໝົດໃຫ້ພຣະອົງເຫັນ.

9 ແລະ *ມານໄດ້ມາຫາພຣະອົງອີກ, ແລະ ກ່າວວ່າ,* ເຮົາຈະມອບສິ່ງທັງໝົດນີ້ໃຫ້ແກ່ທ່ານ, ຖ້າທ່ານກົ້ມຂາບນະມັດສະການເຮົາ.

**ປຈສ, ມັດທາຍ 4:11.** ປຽບທຽບໃສ່ກັບ ມັດທາຍ 4:11

ພຣະເຢຊູສົ່ງທູດໄປປະຕິບັດສາດສະໜາກິດແກ່ໂຢຮັນບັບຕິສະໂຕ.

11 *ແລະ ບັດນີ້ ພຣະເຢຊູໄດ້ຮູ້ວ່າ ໂຢຮັນຖືກສົ່ງເຂົ້າຄຸກ, ແລະ ພຣະອົງ ໄດ້ສົ່ງທູດໄປ,* ແລະ, ຈົ່ງເບິ່ງ, *ພວກເພິ່ນ*ໄດ້ໄປ ແລະ ປະຕິບັດສາດສະໜາກິດແກ່ລາວ.

**ປຈສ, ມັດທາຍ 4:18.** ປຽບທຽບໃສ່ກັບ ມັດທາຍ 4:19

ສາດສະດາໃນພຣະຄຳພີເດີມໄດ້ກ່າວເຖິງພຣະເຢຊູ.

18 ແລະ ພຣະອົງ*ໄດ້ກ່າວ*ກັບພວກເຂົາວ່າ *ເຮົາຄືຜູ້ທີ່ສາດສະດາໄດ້ຂຽນເຖິງ;* ຈົ່ງຕາມເຮົາມາ, ແລະ ເຮົາຈະເຮັດໃຫ້ພວກເຈົ້າເປັນຜູ້ຫາຄົນ.

**ປຈສ, ມັດທາຍ 4:22.** ປຽບທຽບໃສ່ກັບ ມັດທາຍ 4:23

ພຣະເຢຊູປິ່ນປົວຜູ້ຄົນໃນບັນດາຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ.

22 ແລະ ພຣະເຢຊູໄດ້ເດີນທາງໄປທົ່ວແຂວງຄາລິເລ ສິດສອນຄົນໃນທຳມະສາລາ, ແລະ ສັ່ງສອນພຣະກິດຕິຄຸນເລື່ອງອານາຈັກ; ແລະ ປິ່ນປົວຄົນທີ່ເຈັບໄຂ້ໄດ້ປ່ວຍ ແລະ *ພະຍາດໂລຄາທຸກຊະນິດ,* ໃນບັນດາຜູ້ຄົນທີ່*ໄດ້ເຊື່ອໃນພຣະນາມຂອງພຣະອົງ.*

**ປຈສ, ມັດທາຍ 5:21.** ປຽບທຽບໃສ່ກັບ ມັດທາຍ 5:19

ຜູ້ທີ່ຮັກສາພຣະບັນຍັດ ແລະ ສອນຄົນອື່ນໃຫ້ເຮັດເຊັ່ນດຽວກັນ ຈະລອດ.

21 ສະນັ້ນ, ຜູ້ໃດປະຕິເສດພຣະບັນຍັດຂໍ້ເລັກນ້ອຍທີ່ສຸດ, ແລະ ທັງສັ່ງສອນຄົນອື່ນ*ໃຫ້ປະຕິເສດ, ຜູ້ນັ້ນຈະບໍ່ລອດໃນອານາຈັກສະຫວັນ;* ແຕ່ຜູ້ໃດຈະເຮັດ ແລະ ສອນ *ພຣະບັນຍັດເຫລົ່ານີ້ຂອງກົດຈົນກວ່າມັນສຳເລັດຄົບຖ້ວນ,* ຜູ້ນັ້ນຈະເປັນຜູ້ໃຫຍ່, *ແລະ ຈະລອດ*ໃນອານາຈັກສະຫວັນ.

**ປຈສ, ມັດທາຍ 6:14.** ປຽບທຽບໃສ່ກັບ ມັດທາຍ 6:13; ມີການປ່ຽນແປງທີ່ຄ້າຍຄືກັນ ໃນ ລູກາ 11:4

ພຣະຜູ້ເປັນເຈົ້າບໍ່ນຳພາເຮົາໄປສູ່ການລໍ້ລວງ.

14 ແລະ *ຂໍຢ່າພາ*ພວກຂ້ານ້ອຍເຂົ້າໄປໃນການລໍ້ລວງ, ແຕ່ຂໍປົດປ່ອຍພວກຂ້ານ້ອຍຈາກມານຊົ່ວຮ້າຍ.

**ປຈສ, ມັດທາຍ 6:22.** ປຽບທຽບໃສ່ກັບ ມັດທາຍ 6:22

ຖ້າຫາກດວງຕາຂອງພວກເຮົາເຫັນແກ່ລັດສະໝີພາບຂອງພຣະເຈົ້າແຕ່ຢ່າງດຽວ, ທັງຮ່າງກາຍຂອງພວກເຮົາ ກໍຈະເຕັມໄປດ້ວຍຄວາມສະຫວ່າງ.

22 ຕາເປັນໂຄມໄຟຂອງຮ່າງກາຍ; ສະນັ້ນ ຖ້າຫາກຕາຂອງພວກເຈົ້າເຫັນແກ່*ລັດສະໝີພາບຂອງພຣະເຈົ້າ*ແຕ່ຢ່າງດຽວ, ທັງຮ່າງກາຍຂອງພວກເຈົ້າກໍຈະເຕັມໄປດ້ວຍຄວາມສະຫວ່າງ.

**ປຈສ, ມັດທາຍ 6:25–27.** ປຽບທຽບໃສ່ກັບ ມັດທາຍ 6:25; 10:10

ພຣະເຢຊູເຕືອນສານຸສິດຂອງພຣະອົງ ເຖິງວຽກງານທີ່ຫຍຸ້ງຍາກຂອງເຂົາເຈົ້າ ແຕ່ສັນຍາວ່າ ພຣະອົງຈະຕຽມທາງໄວ້ໃຫ້ ແລະ ວ່າພຣະບິດາເທິງສະຫວັນຈະຈັດຫາໃຫ້ເຂົາເຈົ້າ.

25 *ແ ລະ, ອີກ ເທື່ອ ໜຶ່ງ, ເຮົາ ກ່າວ ກັບ*
*ພວກ ເຈົ້າ ວ່າ, ເຈົ້າທັງຫລາຍ ຈົ່ງ ໄປທົ່ວ*
*ໂລກ, ແລະ ບໍ່ຕ້ອງຫ່ວງໃຍນຳຊາວ ໂລກ;*
*ເພາະຊາວໂລກຈະກຽດຊັງພວກເຈົ້າ, ແລະ*
*ຈະຂົ່ມເຫັງພວກເຈົ້າ, ແລະ ຈະຂັບໄລ່ພວກ*
*ເຈົ້າອອກໄປຈາກທຳມະສາລາຂອງພວກ*
*ເຂົາ.*
26 *ເຖິງ ຢ່າງ ໃດ ກໍ ຕາມ, ພວກ ເຈົ້າ ຈະ*
*ໄປຫາເຮືອນນີ້ເຮືອນນັ້ນ, ສິດສອນຜູ້ຄົນ;*
*ແລະ ເຮົາຈະນຳໜ້າພວກເຈົ້າ.*
27 *ແລະ ພຣະ ບິດາເທິງສະຫວັນຂອງ*
*ພວກເຈົ້າ ຈະຈັດຫາໃຫ້ພວກເຈົ້າ, ສິ່ງໃດກໍ*
*ຕາມທີ່ພວກເຈົ້າຕ້ອງການສຳລັບອາຫານ,*
*ສິ່ງທີ່ພວກເຈົ້າຈະກິນ; ແລະ ສຳລັບເສື້ອ*
*ຜ້າ, ສິ່ງທີ່ພວກເຈົ້າຈະນຸ່ງ ຫລື ຫົ່ມ.*

**ປຈສ, ມັດທາຍ 6:38.** ປຽບທຽບໃສ່ກັບ ມັດທາຍ 6:33

ກ່ອນອື່ນໝົດ ພວກເຮົາຄວນສະແຫວງຫາທີ່ຈະສ້າງອານາຈັກຂອງພຣະເຈົ້າ.

38 *ດັ່ງນັ້ນ, ຢ່າສະແຫວງຫາສິ່ງທີ່ເປັນ*
*ຂອງໂລກ,* ແຕ່ກ່ອນອື່ນໝົດ ຈົ່ງສະແຫວງ
ຫາ*ທີ່ຈະສ້າງ*ອານາ ຈັກຂອງ ພຣະເຈົ້າ,
ແລະ *ທີ່ຈະສະຖາປະນາ*ຄວາມຊອບ ທຳ
ຂອງພຣະອົງ, ແລະ ສິ່ງທັງໝົດເຫລົ່ານີ້ ຈະ
ຖືກເພີ່ມເຕີມໃຫ້ແກ່ພວກເຈົ້າ.

**ປຈສ, ມັດທາຍ 7:1–2.** ປຽບທຽບໃສ່ກັບ ມັດທາຍ 7:1–2

ຢ່າຕັດສິນຢ່າງບໍ່ຊອບທຳ.

1 *ບັດ ນີ້ ນີ້ ຄື ຖ້ອຍ ຄຳ ຊຶ່ງ ພຣະ ເຢຊູ ໄດ້*
*ສອນສານຸສິດຂອງພຣະອົງ ເຖິງສິ່ງທີ່ພວກ*
*ເຂົາຄວນກ່າວກັບຜູ້ຄົນ.*
2 ຢ່າຕັດສິນຢ່າງ*ບໍ່ຊອບທຳ,* ເພື່ອເຈົ້າຈະ
ບໍ່ຖືກຕັດສິນ; *ແຕ່ຈົ່ງຕັດສິນຢ່າງຊອບທຳ.*

**ປຈສ, ມັດທາຍ 7:4–8.** ປຽບທຽບໃສ່ກັບ ມັດທາຍ 7:3–5

ພຣະເຢຊູສອນສານຸສິດຂອງພຣະອົງ ໃຫ້ປະເຊີນໜ້າກັບພວກທຳມະຈານ, ພວກຟາຣີຊາຍ, ພວກປະໂລຫິດ, ແລະ ພວກເລວີ ເພາະຄວາມໜ້າຊື່ໃຈຄົດຂອງພວກເຂົາ.

4 *ແລະ ອີກເທື່ອໜຶ່ງ, ພວກເຈົ້າຕ້ອງກ່າວ*
*ກັບພວກເຂົາວ່າ, ເປັນຫຍັງເຈົ້າຈຶ່ງ*ຫລຽວ
ເຫັນຂີ້ເຫຍື້ອຢູ່ໃນຕາຂອງພີ່ນ້ອງຂອງເຈົ້າ,
ແຕ່ໄມ້ທັງທ່ອນຢູ່ໃນຕາຂອງເຈົ້າເອງແລ້ວ
ເຈົ້າບໍ່ເຫັນ?
5 ຫລື ດ້ວຍເຫດໃດເຈົ້າຈຶ່ງເວົ້າຕໍ່ພີ່ນ້ອງ
ຂອງເຈົ້າວ່າ, ຂໍອະນຸຍາດໃຫ້ຂ້ອຍເອົາຂີ້
ເຫຍື້ອອອກຈາກຕາຂອງເຈົ້າແດ່; *ແຕ່ບໍ່*
*ສາມາດຫລຽວເຫັນ* ໄມ້ທັງທ່ອນທີ່ຢູ່ໃນຕາ
ຂອງເຈົ້າເອງ?
6 *ແລະ ພຣະເຢຊູ ໄດ້ກ່າວກັບສານຸສິດ*
*ຂອງພຣະອົງວ່າ, ຈົ່ງເບິ່ງ ພວກເຈົ້າເປັນ*
*ພວກທຳມະຈານ, ແລະ ພວກຟາລີຊາຍ,*
*ແລະ ພວກປະໂລຫິດ, ແລະ ພວກເລວີ*
*ບໍ? ພວກເຂົາສອນຢູ່ໃນທຳມະສາລາຂອງ*
*ພວກເຂົາ, ແຕ່ບໍ່ຮັກສາກົດ, ຫລື ພຣະບັນ*
*ຍັດ; ແລະ ທຸກຄົນໄດ້ອອກໄປ, ແລະ ຢູ່*
*ພາຍໃຕ້ບາບ.*
7 *ພວກເຈົ້າຈົ່ງອອກໄປ ແລະ ກ່າວກັບ*
*ພວກເຂົາວ່າ, ເປັນຫຍັງພວກທ່ານຈຶ່ງສອນ*
*ກົດ ແລະ ພຣະບັນຍັດໃຫ້ຜູ້ຄົນ, ແຕ່ຕົວ*
*ເອງເປັນລູກໆຂອງຄວາມເສື່ອມສູນ?*
8 *ຈົ່ງກ່າວກັບພວກເຂົາວ່າ,* ຄົນໜ້າຊື່ໃຈ
ຄົດເອີຍ, ຈົ່ງເອົາໄມ້ທັງທ່ອນອອກຈາກຕາ

ຂອງເຈົ້າເອງສາກ່ອນ; ແລະ ແລ້ວເຈົ້າກໍຈະສາມາດເຫັນໄດ້ແຈ້ງ ເພື່ອເອົາຂີ້ເຫຍື້ອອອກຈາກຕາພີ່ນ້ອງຂອງເຈົ້າ.

**ປຈສ, ມັດທາຍ 7:9–11.** ປຽບທຽບໃສ່ກັບ ມັດທາຍ 7:6

ພຣະເຢຊູສອນສານຸສິດຂອງພຣະອົງໃຫ້ສັ່ງສອນເລື່ອງການກັບໃຈ ແລະ ບໍ່ໃຫ້ບອກໂລກກ່ຽວກັບຄວາມລຶກລັບຂອງອານາຈັກ.

9 *ພວກເຈົ້າຈົ່ງອອກໄປໃນໂລກ, ກ່າວກັບທຸກຄົນວ່າ ຈົ່ງກັບໃຈ, ເພາະອານາຈັກສະຫວັນມາໃກ້ພວກທ່ານແລ້ວ.*

10 *ແລະ ຄວາມລຶກລັບຂອງອານາຈັກເຈົ້າຈົ່ງເກັບມັນໄວ້ກັບຕົນເອງ; ເພາະບໍ່ສົມຄວນທີ່ຈະເອົາສິ່ງທີ່ບໍລິສຸດໂຍນໃຫ້ໝາ;* ທັງຢ່າໂຍນໄຂ່ມຸກ*ໃສ່ຕໍ່ໜ້າໝູ,* ຢ້ານວ່າມັນຈະຢຽບຢ່ຳຖິ້ມໄວ້ໃຕ້ຕີນຂອງມັນ.

11 *ເພາະໂລກບໍ່ສາມາດຮັບສິ່ງທີ່ພວກເຈົ້າ, ພວກເຈົ້າເອງ, ບໍ່ສາມາດຈະທົນຮັບໄດ້; ດັ່ງນັ້ນ ຢ່າໂຍນໄຂ່ມຸກຂອງພວກເຈົ້າໃຫ້ພວກເຂົາ, ຢ້ານວ່າພວກເຂົາຈະ*ຫັນກັບມາສີກເນື້ອພວກເຈົ້າ.

**ປຈສ, ມັດທາຍ 7:12–17.** ປຽບທຽບໃສ່ກັບ ມັດທາຍ 7:7–8

ພຣະເຢຊູສອນສານຸສິດຂອງພຣະອົງວ່າ ພຣະບິດາປະທານການເປີດເຜີຍໃຫ້ແກ່ທຸກຄົນທີ່ທູນຂໍ.

12 *ໃຫ້ກ່າວກັບພວກເຂົາວ່າ, ຈົ່ງທູນຕໍ່ພຣະເຈົ້າ;* ຈົ່ງໝັ່ນຂໍ, ແລ້ວເຈົ້າຈະໄດ້ຮັບ; ຈົ່ງໝັ່ນຊອກຫາ, ແລ້ວເຈົ້າຈະໄດ້ພົບ; ຈົ່ງໝັ່ນເຄາະ, ແລ້ວຈະມີຜູ້ໄຂໃຫ້ເຈົ້າ.

13 ດ້ວຍວ່າ ທຸກຄົນທີ່ຂໍກໍຈະໄດ້ຮັບ, ທຸກຄົນທີ່ຊອກຫາກໍຈະໄດ້ພົບ ແລະ ທຸກຄົນທີ່ເຄາະກໍຈະມີຜູ້ໄຂໃຫ້.

14 *ແລະ ແລ້ວສານຸສິດຂອງພຣະອົງໄດ້ກ່າວກັບພຣະອົງວ່າ, ພວກເຂົາຈະກ່າວກັບພວກຂ້ານ້ອຍວ່າ, ພວກເຮົາເປັນຄົນຊອບທຳແລ້ວ, ແລະ ບໍ່ຈຳເປັນຕ້ອງໃຫ້ຜູ້ຄົນມາສອນພວກເຮົາ. ພວກເຮົາຮູ້ວ່າ ພຣະເຈົ້າຮັບຟັງໂມເຊ ແລະ ສາດສະດາບາງທ່ານ; ແຕ່ພຣະອົງຈະບໍ່ຮັບຟັງພວກເຮົາ.*

15 *ແລະ ພວກເຂົາຈະກ່າວວ່າ, ພວກເຮົາມີກົດສຳລັບຄວາມລອດ, ແລະ ມັນກໍພຽງພໍແລ້ວສຳລັບພວກເຮົາ.*

16 *ແລ້ວ ພຣະເຢຊູໄດ້ຕອບ, ແລະ ໄດ້ກ່າວຕໍ່ສານຸສິດຂອງພຣະອົງວ່າ, ດັ່ງນັ້ນພວກເຈົ້າຕ້ອງກ່າວກັບພວກເຂົາ,*

17 *ມີພໍ່ຄົນໃດ ແດ່ໃນບັນດາພວກເຈົ້າ, ທີ່ມີລູກຊາຍ, ແລະ ໃຫ້ລາວຢືນຢູ່ນອກເຮືອນ, ແລະ ເວົ້າວ່າ, ພໍ່ເອີຍ, ຈົ່ງເປີດປະຕູໃຫ້ລູກແດ່ ເພື່ອວ່າລູກຈະໄດ້ເຂົ້າໄປ ແລະ ກິນເຂົ້ານຳພໍ່, ແລ້ວພໍ່ຈະບໍ່ເວົ້າວ່າ, ເຂົ້າມາ, ລູກເອີຍ; ເພາະສິ່ງທີ່ພໍ່ມີກໍເປັນຂອງລູກ, ແລະ ສິ່ງທີ່ລູກມີກໍເປັນຂອງພໍ່?*

**ປຈສ, ມັດທາຍ 9:18–21.** ປຽບທຽບໃສ່ກັບ ມັດທາຍ 9:16–17

ພຣະເຢຊູປະຕິເສດການບັບຕິສະມາຂອງພວກຟາຣີຊາຍ; ມັນບໍ່ມີຄ່າ ເພາະພວກເຂົາບໍ່ຮັບຮູ້ພຣະອົງ. ພຣະອົງປະກາດວ່າ ພຣະອົງເປັນຜູ້ທີ່ໄດ້ມອບກົດຂອງໂມເຊໃຫ້.

18 *ຈາກນັ້ນ ພວກຟາຣີຊາຍໄດ້ກ່າວກັບພຣະອົງວ່າ ດ້ວຍເຫດໃດທ່ານຈຶ່ງບໍ່ຮັບພວກເຮົາ ພ້ອມກັບການບັບຕິສະມາຂອງພວກເຮົາ, ເພາະພວກເຮົາຮັກສາກົດທັງໝົດ?*

19 *ແຕ່ພຣະເຢຊູໄດ້ກ່າວກັບພວກເຂົາວ່າ ພວກທ່ານບໍ່ໄດ້ຮັກສາກົດ. ຖ້າພວກທ່ານໄດ້ຮັກສາກົດ, ພວກທ່ານກໍຈະຮັບຮູ້ເຮົາ, ເພາະເຮົາຄືຜູ້ທີ່ໄດ້ມອບກົດໃຫ້.*

20 *ເຮົາບໍ່ຮັບເອົາພວກທ່ານ ພ້ອມດ້ວຍການບັບຕິສະມາຂອງພວກທ່ານ, ເພາະມັນບໍ່ເປັນປະໂຫຍດອັນໃດກັບພວກທ່ານເລີຍ.*

21 *ເພາະ ເມື່ອສິ່ງໃໝ່ມາເຖິງ, ສິ່ງເກົ່າກໍພ້ອມທີ່ຈະຍົກເລີກໄປ.*

**ປຈສ, ມັດທາຍ 1:13–15.** ປຽບທຽບໃສ່ກັບ ມັດທາຍ 11:10–11, 13–14

ໂຢຮັນບັບຕິສະໂຕຄື ອີລາຍ ຜູ້ຈະມາເພື່ອຕຽມທາງສຳລັບພຣະຜູ້ຊ່ວຍໃຫ້ລອດ.

13 *ແຕ່ຄົງຈະມີເວລາໜຶ່ງ, ເມື່ອຄວາມຮຸນແຮງຈະບໍ່ມີອຳນາດເລີຍ;* ເພາະສາດສະດາທຸກຄົນ ແລະ ກົດ ໄດ້ທຳນາຍ *ວ່າມັນຄວນເປັນດັ່ງນັ້ນ* ຈົນເຖິງຄາວຂອງໂຢຮັນ.
14 *ແທ້ຈິງແລ້ວ, ມີຄຳທຳນາຍບອກໄວ້ລ່ວງໜ້າຫລາຍເທື່ອ ກ່ຽວກັບມື້ເຫລົ່ານີ້.*
15 ແລະ ຖ້າພວກເຈົ້າຍອມຮັບເອົາຖ້ອຍຄຳນີ້, *ແທ້ຈິງແລ້ວ, ເພິ່ນຄື* ອີລາຍ, *ຜູ້ທີ່ທຳ*ນາຍໄວ້ລ່ວງໜ້າວ່າຈະມາ *ແລະ ຕຽມທຸກສິ່ງ.*

**ປຈສ, ມັດທາຍ 12:37–38.** ປຽບທຽບໃສ່ກັບ ມັດທາຍ 12:43–44; ເບິ່ງ ປຈສ, ລູກາ 12:9–12 ນຳອີກ

ຜູ້ໃດກໍຕາມທີ່ກ່າວຕໍ່ຕ້ານພຣະວິນຍານບໍລິສຸດ ຈະບໍ່ໄດ້ຮັບການໃຫ້ອະໄພ.

37 *ແລ້ວ ພວກ ທຳມະຈານ ໄດ້ ມາ ແລະ ໄດ້ກ່າວກັບພຣະອົງວ່າ, ອາຈານເອີຍ, ມີຂຽນໄວ້ວ່າ, ບາບທັງໝົດຈະໄດ້ຮັບການໃຫ້ອະໄພ; ແຕ່ພຣະອົງກ່າວວ່າ, ຜູ້ໃດກໍຕາມທີ່ກ່າວຕໍ່ຕ້ານພຣະວິນຍານບໍລິສຸດ ຈະບໍ່ໄດ້ຮັບການໃຫ້ອະໄພ. ແລະ ພວກເຂົາໄດ້ຖາມພຣະອົງ, ກ່າວວ່າ, ສິ່ງນີ້ເປັນໄປໄດ້ຢ່າງໃດ?*
38 *ແລະ ພຣະອົງໄດ້ກ່າວກັບພວກເຂົາວ່າ, ເມື່ອຜີຊົ່ວຮ້າຍອອກຈາກຄົນໜຶ່ງແລ້ວ,* ມັນກໍທຽວໄປມາໃນຖິ່ນແຫ້ງແລ້ງກັນດານ, ຊອກຫາບ່ອນພັກເຊົາ ແຕ່ມັນຫາບໍ່ໄດ້; *ແຕ່ເມື່ອຄົນໜຶ່ງກ່າວຕໍ່ຕ້ານພຣະວິນຍານບໍລິສຸດ,* ເຂົາເວົ້າວ່າ, ເຮົາຈະກັບຄືນເມືອເຮືອນບ່ອນທີ່ເຮົາໄດ້ໜີມາ; ແລະ ເມື່ອເຂົາກັບເມືອເຮືອນ, *ເຂົາເຫັນເຮືອນວ່າງເປົ່າຢູ່,* ສະອາດ ແລະ ຕົບແຕ່ງໄວ້ຢ່າງດີ; *ເພາະວິນຍານທີ່ດີໄດ້ໜີປະລາວໃຫ້ຢູ່ຄົນດຽວ.*

**ປຈສ, ມັດທາຍ 13:39–44.** ປຽບທຽບໃສ່ກັບ ມັດທາຍ 13:39–42; ເບິ່ງ ຄພ 86:1–7 ນຳອີກ

ກ່ອນຄາວສິ້ນສຸດໂລກ (ຄວາມພິນາດຂອງຄົນຊົ່ວ), ຜູ້ສົ່ງຂ່າວທີ່ຖືກສົ່ງມາຈາກສະຫວັນ ຈະເຕົ້າໂຮມຄົນຊອບທຳ ຈາກບັນດາຄົນຊົ່ວ.

39 ລະ ດູ ເກັບ ກ່ຽວ ແມ່ນ ຄາວ ສິ້ນ ສຸດ ໂລກ, *ຫລື ຄວາມພິນາດຂອງຄົນຊົ່ວ.*
40 ຜູ້ເກັບກ່ຽວແມ່ນເຫລົ່າທູດ, *ຫລື ຜູ້ສົ່ງຂ່າວທີ່ຖືກສົ່ງມາຈາກສະຫວັນ.*
41 ສະນັ້ນ, ດັ່ງທີ່ເຂົ້ານົກຖືກກວາດເອົາໄປເຜົາໃສ່ໄຟຢ່າງໃດ, ຄາວສິ້ນສຸດໂລກ, *ຫລື ຄວາມພິນາດຂອງຄົນຊົ່ວ,* ກໍຈະເປັນຢ່າງນັ້ນ.
42 *ເພາະ ໃນ ມື້ ນັ້ນ, ກ່ອນ* ບຸດ ມະນຸດ ຈະ *ສະ ເດັດມາ, ພຣະອົງ* ຈະສົ່ງທູດຂອງພຣະອົງ *ແລະ ຜູ້ສົ່ງຂ່າວຂອງສະຫວັນ* ມາກ່ອນ.
43 ແລະ ເຂົາເຈົ້າຈະຮວບຮວມເອົາອອກມາຈາກອານາຈັກຂອງພຣະອົງ ຄືພວກທີ່ກໍ່ເຫດທັງໝົດໃຫ້ມະນຸດເຮັດບາບ, ແລະ ບັນດາຜູ້ທີ່ເຮັດຊົ່ວທັງໝົດ, ແລະ ຈະຂັບໄລ່ພວກເຂົາ*ອອກໄປຫາບັນດາຄົນຊົ່ວ; ແລະ* ຈະມີການຮ້ອງໄຫ້ຄວນຄາງ ແລະ ຂົບແຂ້ວຄຽ້ວຟັນ.
44 *ເພາະໂລກຈະຖືກເຜົາດ້ວຍໄຟ.*

**ປຈສ, ມັດທາຍ 16:25–29.** ປຽບທຽບໃສ່ກັບ ມັດທາຍ 16:24–26

ພຣະເຢຊູອະທິບາຍຄວາມໝາຍຂອງການ "ແບກໄມ້ກາງແຂນຂອງຕົນ" ດັ່ງນີ້: ຄືທີ່ຈະປະຕິເສດຕົນ

ເອງຈາກຄວາມບໍ່ເປັນເໝືອນພຣະເຈົ້າ ແລະ ຄວາມໄຄ່ທັງໝົດຂອງໂລກ ແລະ ທີ່ຈະຮັກສາພຣະບັນຍັດຂອງພຣະອົງ.

25 ຈາກນັ້ນພຣະເຢຊູໄດ້ກ່າວກັບສານຸສິດຂອງພຣະອົງວ່າ ຖ້າຜູ້ໃດຢາກຕາມເຮົາມາ, ໃຫ້ຜູ້ນັ້ນປະຕິເສດຕົນເອງ, ແລະ ຮັບແບກໄມ້ກາງແຂນຂອງຕົນ ແລ້ວຕິດຕາມເຮົາມາ.

26 *ແລະ ບັດນີ້ໃນການທີ່ມະນຸດຈະຮັບແບກໄມ້ກາງແຂນຂອງຕົນເອງນັ້ນ, ໝາຍເຖິງການປະຕິເສດຕົນເອງຈາກຄວາມບໍ່ເປັນເໝືອນພຣະເຈົ້າ, ແລະ ຄວາມໄຄ່ທັງໝົດຂອງໂລກ, ແລະ ຮັກສາບັນຍັດຂອງເຮົາ.*

27 *ຈົ່ງຢ່າລະເມີດບັນຍັດຂອງເຮົາ ເພື່ອຈະຮັກສາຊີວິດຂອງຕົນ;* ເພາະຜູ້ໃດຢາກຮັກສາຊີວິດຂອງຕົນໄວ້ໃຫ້ລອດ *ໃນໂລກນີ້,* ຜູ້ນັ້ນຈະເສຍຊີວິດ *ໃນໂລກໜ້າ.*

28 ແລະ ຜູ້ໃດທີ່ຈະເສຍຊີວິດຂອງຕົນ *ໃນໂລກນີ້,* ເພື່ອເຫັນແກ່ເຮົາ, ຜູ້ນັ້ນຈະໄດ້ພົບຊີວິດ *ໃນໂລກໜ້າ.*

29 *ສະນັ້ນ, ຈົ່ງປະຖິ້ມໂລກນີ້, ແລະ ຮັກສາຈິດວິນຍານຂອງເຈົ້າໄວ້;* ເພາະຖ້າຄົນໃດຄົນໜຶ່ງຈະໄດ້ຊັບສົມບັດ, ຖ້າຫາກເຂົາຈະໄດ້ໝົດທັງໂລກ, ແຕ່ຕ້ອງເສຍຈິດວິນຍານຂອງຕົນ ຄົນນັ້ນຈະໄດ້ປະໂຫຍດອັນໃດ? ຫລື ຄົນນັ້ນຈະເອົາສິ່ງໃດມາແລກເອົາຈິດວິນຍານຂອງຕົນຄືນໄດ້?

**ປຈສ, ມັດທາຍ 17:10–14.** ປຽບທຽບໃສ່ກັບ ມັດທາຍ 17:11–13

ພຣະເຢຊູສອນກ່ຽວກັບອີລາຍສອງຄົນ—ຜູ້ໜຶ່ງເພື່ອຕຽມ ແລະ ອີກຜູ້ໜຶ່ງເພື່ອຟື້ນຟູ.

10 ແລະ ພຣະເຢຊູໄດ້ຕອບ ແລະ ໄດ້ກ່າວກັບພວກເຂົາວ່າ ອີລາຍຈະມາກ່ອນຢ່າງແນ່ນອນ, ແລະ ຟື້ນຟູທຸກສິ່ງ, *ຕາມທີ່ສາດສະດາໄດ້ຂຽນໄວ້.*

11 *ແລະ ອີກເທື່ອໜຶ່ງ*ເຮົາກ່າວກັບພວກເຈົ້າວ່າ ອີລາຍໄດ້ມາແລ້ວ, *ຕາມທີ່ມີຂຽນໄວ້, ຈົ່ງເບິ່ງ, ເຮົາຈະສົ່ງຜູ້ສົ່ງຂ່າວຂອງເຮົາໄປ, ແລະ ລາວຈະຕຽມທາງໄວ້ໃຫ້ເຮົາ;* ແລະ ພວກເຂົາຈະບໍ່ຮູ້ຈັກລາວ, ແລະ ຈະເຮັດກັບລາວຕາມໃຈຊອບ.

12 ບຸດມະນຸດກໍຈະໄດ້ຮັບທຸກທໍລະມານຈາກພວກເຂົາເຊັ່ນດຽວກັນນັ້ນ.

13 *ແຕ່ເຮົາກ່າວກັບພວກເຈົ້າວ່າ, ອີລາຍຄືໃຜ? ຈົ່ງເບິ່ງ, ນີ້ຄືອີລາຍ, ຜູ້ທີ່ເຮົາໄດ້ສົ່ງໄປຈັດຕຽມທາງໄວ້ໃຫ້ເຮົາ.*

14 ຈາກນັ້ນ ສານຸສິດໄດ້ເຂົ້າໃຈວ່າ ພຣະອົງກ່າວກັບພວກເຂົາກ່ຽວກັບໂຢຮັນບັບຕິສະໂຕ, *ແລະ ກ່ຽວກັບຜູ້ໜຶ່ງອີກ ທີ່ຈະມາ ແລະ ຟື້ນຟູທຸກສິ່ງ, ຕາມທີ່ສາດສະດາໄດ້ຂຽນໄວ້.*

**ປຈສ, ມັດທາຍ 18:11.** ປຽບທຽບໃສ່ກັບ ມັດທາຍ 18:11; ເບິ່ງ ໂມໂຣໄນ 8 ນຳອີກ

ເດັກນ້ອຍໆບໍ່ຈຳເປັນຕ້ອງກັບໃຈ.

11 ເພາະບຸດມະນຸດໄດ້ມາ ເພື່ອຊ່ວຍຄົນທີ່ສູນຫາຍໄປໃຫ້ລອດ, *ແລະ ເພື່ອເອີ້ນຄົນບາບມາສູ່ການກັບໃຈ; ແຕ່ເດັກນ້ອຍໆບໍ່ຈຳເປັນຕ້ອງກັບໃຈ, ແລະ ເຮົາຈະຊ່ວຍພວກເຂົາໃຫ້ລອດ.*

**ປຈສ, ມັດທາຍ 19:13.** ປຽບທຽບໃສ່ກັບ ມັດທາຍ 19:13

ເດັກນ້ອຍໆຈະລອດ.

13 ຈາກນັ້ນ ພວກເດັກນ້ອຍໆ ໄດ້ຖືກນຳມາຫາພຣະອົງ, ເພື່ອໃຫ້ພຣະອົງວາງພຣະຫັດໃສ່ພວກເຂົາ ແລະ ອະທິຖານເພື່ອພວກເຂົາ. ແຕ່ສານຸສິດຂອງພຣະອົງໄດ້ຫ້າມປາມພວກເຂົາ, *ໂດຍກ່າວວ່າ, ບໍ່*

*ຈຳເປັນ, ເພາະພຣະເຢຊູໄດ້ກ່າວແລ້ວວ່າ, ເດັກນ້ອຍໆຈະລອດ.*

**ປຈສ, ມັດທາຍ 21:33.** ປຽບທຽບໃສ່ກັບ ມັດທາຍ 21:32–33

ມະນຸດຕ້ອງກັບໃຈກ່ອນທີ່ເຂົາຈະສາມາດເຊື່ອໃນພຣະຄຣິດ.

33 *ເພາະຄົນທີ່ບໍ່ໄດ້ເຊື່ອ ໂຍຮັນກ່ຽວກັບເຮົາ, ຈະ ເຊື່ອເຮົາບໍ່ໄດ້, ເວັ້ນເສຍແຕ່ເຂົາຈະກັບໃຈເສຍກ່ອນ.*

**ປຈສ, ມັດທາຍ 21:47–56.** ປຽບທຽບ ໃສ່ກັບ ມັດທາຍ 21:45–46

ພຣະເຢຊູປະກາດວ່າ ພຣະອົງເປັນຫີນເສົາເອກ. ພຣະກິດຕິຄຸນຖືກມອບໃຫ້ຊາວຢິວ ແລະ ຈາກນັ້ນໃຫ້ຄົນຕ່າງຊາດ. ຄົນຊົ່ວຈະຖືກທຳລາຍ ເວລາພຣະເຢຊູສະເດັດກັບມາ.

47 ແລະ ເມື່ອຫົວໜ້າປະໂລຫິດ ແລະ ພວກຟາຣີຊາຍ ໄດ້ຍິນຄຳອຸປະມາຂອງ ພຣະອົງ, ພວກເຂົາກໍຮູ້ໄດ້ວ່າ ພຣະອົງເວົ້າເຖິງພວກເຂົາ.

48 *ແລະ ພວກເຂົາໄດ້ກ່າວໃນທ່າມກາງ ພວກເຂົາເອງວ່າ ຊາຍຄົນນີ້ຄິດວ່າ ເຂົາຄົນດຽວຈະສາມາດທຳລາຍອານາຈັກອັນຍິ່ງໃຫຍ່ນີ້ໄດ້ບໍ? ແລະ ພວກເຂົາໄດ້ໃຈຮ້າຍໃຫ້ພຣະອົງ.*

49 ແຕ່ ເມື່ອ ພວກ ເຂົາ ພະ ຍາ ຍາມ ຈັບ ພຣະອົງ, ພວກເຂົາຢ້ານປະຊາຊົນ, ເພາະ ພວກເຂົາຮູ້ວ່າ *ປະຊາຊົນ*ຖືວ່າພຣະອົງເປັນສາດສະດາຂອງພວກເຂົາ.

50 *ແລະ ບັດນີ້ ສານຸສິດຂອງພຣະອົງໄດ້ມາຫາພຣະອົງ, ແລະ ພຣະເຢຊູໄດ້ກ່າວກັບພວກເຂົາວ່າ, ພວກເຈົ້າປະຫລາດໃຈບໍກັບຄຳອຸປະມາທີ່ເຮົາໄດ້ກ່າວກັບພວກເຈົ້າ?*

51 *ຕາມຈິງແລ້ວ, ເຮົາກ່າວກັບພວກເຈົ້າວ່າ ເຮົາຄື ຫີນ, ແລະ ຄົນຊົ່ວເຫລົ່ານັ້ນປະຕິເສດເຮົາ.*

52 *ເຮົາ ຄື ຫີນ ຂອງ ເສົາ ເອກ. ຊາວ ຢິວເຫລົ່ານີ້ຈະໂຈມຕີເຮົາ, ແລະ ຈະແຕກຜ່າຍໄປ.*

53 *ແລະ ອານາຈັກຂອງພຣະເຈົ້າຈະຖືກເອົາໄປຈາກພວກເຂົາ, ແລະ ຈະຖືກມອບໃຫ້ປະຊາຊາດໜຶ່ງ ທີ່ນຳຜົນຂອງມັນອອກມາ; (ໝາຍເຖິງ ຄົນຕ່າງຊາດ.)*

54 *ດັ່ງນັ້ນ, ຜູ້ໃດກໍຕາມທີ່ຖືກຫີນກ້ອນນີ້ລົ້ມທັບ, ມັນຈະບົດເຂົາໃຫ້ລະອຽດດັ່ງແປ້ງ.*

55 *ແລະ ສະນັ້ນ ເມື່ອພຣະຜູ້ເປັນເຈົ້າຂອງສວນອະງຸ່ນສະເດັດມາ, ພຣະອົງຈະທຳລາຍຄົນຊົ່ວທີ່ເສົ້າສະຫລົດໃຈເຫລົ່ານັ້ນ, ແລະ ຈະຍົກສວນອະງຸ່ນຂອງພຣະອົງໃຫ້ຜູ້ເຊົ່າສວນຄົນໃໝ່, ແມ່ນແຕ່ໃນຍຸກສຸດທ້າຍ, ຜູ້ຈະນຳຜົນຕາມລະດູການຂອງມັນມາຖວາຍແດ່ພຣະອົງ.*

56 *ແລະ ຈາກນັ້ນ ພວກເຂົາຈຶ່ງເຂົ້າໃຈຄຳອຸປະມາທີ່ພຣະອົງໄດ້ກ່າວກັບພວກເຂົາ, ວ່າຄົນຕ່າງຊາດຈະຖືກທຳລາຍຄືກັນ, ເມື່ອພຣະຜູ້ເປັນເຈົ້າຈະສະເດັດມາຈາກສະຫວັນ ເພື່ອປົກຄອງສວນອະງຸ່ນຂອງພຣະອົງ, ຊຶ່ງເປັນແຜ່ນດິນໂລກ ແລະ ຜູ້ອາໄສຢູ່ໃນນັ້ນ.*

**ປຈສ, ມັດທາຍ 23:6.** ປຽບທຽບໃສ່ກັບ ມັດທາຍ 23:9

ພຣະຜູ້ສະຖິດຢູ່ໃນສະຫວັນເປັນພຣະຜູ້ສ້າງຂອງເຮົາ.

6 ແລະ ຢ່າ ເອີ້ນຜູ້ ໃດຢູ່ ເທິງ ໂລກ ນີ້ ວ່າເປັນພຣະຜູ້ສ້າງຂອງພວກເຈົ້າ, ຫລື *ພຣະ ບິດາ ເທິງສະຫວັນຂອງພວກເຈົ້າ;* ເພາະ*ພຣະຜູ້ສ້າງ ແລະ* ພຣະ*ບິດາເທິງສະຫວັນຂອງ*ພວກເຈົ້າ *ຄືຜູ້ສະຖິດຢູ່ໃນ*ສະຫວັນ.

**ປຈສ, ມັດທາຍ 26:22, 24–25.** ປຽບທຽບໃສ່ກັບ ມັດທາຍ 26:26–28; ປຈສ, ມາຣະໂກ 14:20–25

ເປັນເທື່ອທຳອິດ ພຣະເຢຊູຫັກເຂົ້າຈີ່ຂອງສິນລະລຶກເປັນປ່ຽງໆ ແລ້ວອວຍພອນມັນ. ສິນລະລຶກເປັນການລະນຶກເຖິງພຣະກາຍ ແລະ ໂລຫິດຂອງພຣະເຢຊູ.

22 ແລະ ໃນຂະນະທີ່ເຂົາເຈົ້າຮັບປະທານອາຫານ, ພຣະເຢຊູໄດ້ຢິບເຂົ້າຈີ່ຂຶ້ນມາ ແລະ *ຫັກມັນເປັນປ່ຽງໆ*, ແລະ *ໄດ້ອວຍພອນມັນ*, ແລະ ໄດ້ເອົາໃຫ້ສານຸສິດ*ຂອງພຣະອົງ*ກິນ, ແລະ ກ່າວວ່າ, ຈົ່ງຮັບກິນເຖີດ; ນີ້ເປັນ*ການລະນຶກເຖິງ*ເນື້ອກາຍຂອງເຮົາ *ຊຶ່ງເຮົາໄດ້ໄຖ່ແທນພວກເຈົ້າ.*

24 ເພາະນີ້ເປັນ*ການລະນຶກເຖິງ*ເລືອດຂອງເຮົາ ເພື່ອເປັນພັນທະສັນຍາໃໝ່, ຊຶ່ງເຮົາໄດ້ຫລັ່ງເພື່ອຫລາຍຕໍ່ຫລາຍຄົນ*ທີ່ຈະເຊື່ອໃນນາມຂອງເຮົາ*, ເພື່ອການປົດບາບ*ຂອງພວກເຂົາ.*

25 *ແລະ ເຮົາມອບບັນຍັດຂໍ້ໜຶ່ງໃຫ້ແກ່ພວກເຈົ້າ, ວ່າພວກເຈົ້າຈະຍຶດຖື ທີ່ຈະເຮັດສິ່ງທີ່ພວກເຈົ້າເຄີຍເຫັນເຮົາເຮັດ, ແລະ ເປັນພະຍານເຖິງເຮົາ ຈົນເຖິງທີ່ສຸດຂອງຊີວິດ.*

**ປຈສ, ມັດທາຍ 27:3–6.** ປຽບທຽບໃສ່ກັບ ມັດທາຍ 27:3–5; ກິດຈະການ 1:18

ການຕາຍຂອງຢູດາໄດ້ຖືກບັນຍາຍໄວ້.

3 ຈາກນັ້ນ ຢູດາ, ຜູ້ທີ່ໄດ້ທໍລະຍົດພຣະອົງ, ເມື່ອລາວໄດ້ເຫັນວ່າ ພຣະອົງຖືກກ່າວໂທດ, ຈຶ່ງກັບໃຈ, ແລະ ໄດ້ນຳເງິນສາມສິບຫລຽນນັ້ນມາຄືນໃຫ້ພວກຫົວໜ້າປະໂລຫິດ, ແລະ ພວກຜູ້ອາວຸໂສ,

4 ກ່າວວ່າ, ຂ້ານ້ອຍຜິດໄປແລ້ວ ໂດຍມອບຄົນທີ່ບໍ່ມີຄວາມຜິດໃຫ້ເຖິງແກ່ຄວາມຕາຍ.

5 ແລະ ພວກເຂົາໄດ້ກ່າວ*ກັບ ລາວ*ວ່າ, ເລື່ອງນັ້ນເປັນທຸລະອັນໃດກັບພວກເຮົາ? ເຈົ້າເກັບ*ມັນ*ໄວ້ສາ; *ບາບຂອງເຈົ້າຈະຕົກຢູ່ທີ່ເຈົ້າ.*

6 ແລະ ລາວໄດ້ຖິ້ມເງິນໄວ້ໃນພຣະວິຫານ, ແລະ ໄດ້ຈາກໄປ, ແລະ ອອກໄປ, ແລະ ໄດ້ຜູກຄໍຕາຍ*ຢູ່ຕົ້ນໄມ້. ແລະ ທັນທີທັນໃດ ລາວໄດ້ຕົກລົງມາ, ແລະ ໄສ້ພຸງຂອງລາວໄດ້ແຕກກະຈາຍ, ແລະ ລາວກໍໄດ້ຕາຍ.*

**ປຈສ, ມາຣະໂກ 2:26–27.** ປຽບທຽບໃສ່ກັບ ມາຣະໂກ 2:27–28

ບຸດມະນຸດຄື ພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕ ເພາະພຣະອົງໄດ້ຈັດຕັ້ງວັນຊະບາໂຕຂຶ້ນ.

26 *ດັ່ງນັ້ນ ວັນຊະບາໂຕໄດ້ຖືກມອບໃຫ້ແກ່ມະນຸດ ເພື່ອເປັນວັນພັກຜ່ອນ; ແລະ ວ່າມະນຸດຄວນສັນລະເສີນພຣະເຈົ້ານຳອີກ, ແລະ ບໍ່ແມ່ນວ່າ ມະນຸດບໍ່ຄວນກິນ;*

27 *ເພາະບຸດມະນຸດໄດ້ຈັດຕັ້ງວັນຊະບາໂຕຂຶ້ນ,* ສະນັ້ນບຸດມະນຸດຈຶ່ງເປັນ ພຣະຜູ້ເປັນເຈົ້າແຫ່ງວັນຊະບາໂຕ.

**ປຈສ, ມາຣະໂກ 3:21–25.** ປຽບທຽບໃສ່ກັບ ມາຣະໂກ 3:28–30

ພຣະເຢຊູຈະໃຫ້ອະໄພແກ່ຄົນບາບທຸກຄົນທີ່ກັບໃຈ ຍົກເວັ້ນແຕ່ຄົນທີ່ເວົ້າໝິ່ນປະໝາດຕ້ານພຣະວິນຍານບໍລິສຸດ.

21 *ແລະ ມີພວກຜູ້ຊາຍກຸ່ມໜຶ່ງໄດ້ມາຫາພຣະອົງ, ໄດ້ກ່າວຫາພຣະອົງ, ໂດຍກ່າວວ່າ, ດ້ວຍເຫດໃດທ່ານຈຶ່ງຮັບເອົາຄົນບາບ, ໂດຍທີ່ທ່ານຖືຕົວເອງວ່າ ເປັນພຣະບຸດຂອງພຣະເຈົ້າ.*

22 *ແຕ່ພຣະອົງໄດ້ຕອບພວກເຂົາວ່າ,* ເຮົາບອກພວກເຈົ້າທັງຫລາຍຕາມຄວາມຈິງວ່າ, ການບາບທຸກປະການ *ທີ່ມະນຸດໄດ້ເຮັດ, ເມື່ອເຂົາກັບໃຈ, ເຂົາຈະໄດ້ຮັບການ*

*ໃຫ້ອະໄພ; ເພາະເຮົາມາເພື່ອສັ່ງສອນການກັບໃຈ* ແກ່ລູກຫລານມະນຸດ.

23 ແລະ ຄຳ ໝິ່ນ ປະ ໝາດ ທຸກ ຢ່າງ ທີ່ພວກເຂົາໄດ້ກ່າວ, *ຈະໄດ້ຮັບການໃຫ້ອະໄພ ເມື່ອເຂົາມາຫາເຮົາ, ແລະ ເຮັດວຽກງານຊຶ່ງເຂົາເຫັນເຮົາກະທຳ.*

24 *ແຕ່ຈະມີການບາບທີ່ອະໄພໃຫ້ບໍ່ໄດ້.* ຄົນທີ່ເວົ້າໝິ່ນປະໝາດຕ້ານພຣະວິນຍານບໍລິສຸດ ຈະບໍ່ໄດ້ຮັບການໃຫ້ອະໄພຈັກເທື່ອ; ແຕ່ເຂົາຈະມີໂທດຖານ*ຖືກຕັດອອກຈາກໂລກ. ແລະ ເຂົາຈະໄດ້ຮັບ*ຄວາມອັບປະໂຫຍດນິລັນດອນ.

25 *ແລະ ພຣະອົງໄດ້ກ່າວເຊັ່ນນີ້ກັບພວກເຂົາ* ເພາະພວກເຂົາໄດ້ເວົ້າວ່າ, ພຣະອົງມີຜີຊົ່ວຮ້າຍເຂົ້າສິງຢູ່.

**ປຈສ, ມາຣະໂກ 7:10–12.** ປຽບທຽບໃສ່ກັບ ມາຣະໂກ 7:10

ພຣະເຢຊູກ່າວໂທດຄົນທີ່ປະຕິເສດສາດສະດາ ແລະ ບໍ່ເຊື່ອຟັງກົດຂອງໂມເຊ.

10 *ມັນມີຂຽນໄວ້ເປັນຢ່າງດີເຖິງພວກເຈົ້າ, ໂດຍສາດສະດາທີ່ພວກເຈົ້າບໍ່ຍອມຮັບ.*

11 *ພວກເພິ່ນໄດ້ເປັນພະຍານເຖິງຄວາມຈິງຂອງສິ່ງເຫລົ່ານີ້, ແລະ ເລືອດຂອງເຂົາເຈົ້າຈະຕົກລົງໃສ່ພວກເຈົ້າ.*

12 *ພວກເຈົ້າບໍ່ໄດ້ຮັກສາພິທີການຂອງພຣະເຈົ້າ;* ເພາະໂມເຊໄດ້ກ່າວວ່າ, ຈົ່ງເຄົາລົບນັບຖືພໍ່ແມ່ຂອງຕົນ; ແລະ ຜູ້ໃດກໍຕາມທີ່ປ້ອຍດ່າ ສາບແຊ່ງພໍ່ແມ່ຂອງຕົນຕ້ອງຖືກລົງໂທດເຖິງຕາຍຖານ*ຜູ້ລ່ວງລະເມີດ, ຕາມທີ່ມີຂຽນໄວ້ຢູ່ໃນກົດຂອງພວກເຈົ້າ; ແຕ່ພວກເຈົ້າບໍ່ໄດ້ເຮັດຕາມກົດ.*

**ປຈສ, ມາຣະໂກ 8:37–38.** ປຽບທຽບໃສ່ກັບ ມາຣະໂກ 8:35

ຜູ້ໃດທີ່ເຕັມໃຈຍອມຕາຍເພື່ອເຫັນແກ່ພຣະເຢຊູ ຈະໄດ້ຮັບຄວາມລອດ.

37 ເພາະຜູ້ໃດທີ່ຢາກຊ່ວຍຊີວິດຂອງຕົນໃຫ້ລອດ ຜູ້ນັ້ນກໍຈະເສຍຊີວິດ; *ຫລື ຜູ້ໃດທີ່ຢາກຊ່ວຍຊີວິດຂອງຕົນໃຫ້ລອດ, ທີ່ເຕັມໃຈຍອມຕາຍເພື່ອເຫັນແກ່ເຮົາ; ແລະ ຖ້າຫາກເຂົາບໍ່ຍອມຕາຍເພື່ອເຫັນແກ່ເຮົາ, ຜູ້ນັ້ນກໍຈະເສຍຊີວິດ.*

38 ແຕ່ຜູ້ໃດ*ທີ່ຍອມ*ເສຍຊີວິດຂອງຕົນເພື່ອເຫັນແກ່ເຮົາ, ແລະ ພຣະກິດຕິຄຸນ, ຜູ້ນັ້ນຈະຊ່ວຍຊີວິດຂອງຕົນໃຫ້ລອດ.

**ປຈສ, ມາຣະໂກ 8:42–43.** ປຽບທຽບໃສ່ກັບ ມາຣະໂກ 8:38

ຄົນທີ່ລະອາຍໃນເລື່ອງພຣະຄຣິດ ບໍ່ມີພາກສ່ວນໃນການຟື້ນຄືນຊີວິດຄັ້ງທຳອິດ, ແຕ່ຄົນທີ່ຍອມຕາຍເພື່ອພຣະຄຣິດ ຈະມາກັບພຣະອົງ ໃນລັດສະໝີພາບຂອງພຣະອົງ.

42 *ແລະ ພວກເຮົາຈະບໍ່ມີພາກສ່ວນໃນການຟື້ນຄືນຊີວິດນັ້ນ ເມື່ອພຣະອົງສະເດັດມາ.*

43 *ເພາະ ແທ້ຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ, ພຣະອົງຈະສະເດັດມາ; ແລະ ຄົນທີ່ຍອມຕາຍເພື່ອເຫັນແກ່ເຮົາ* ແລະ ພຣະກິດຕິຄຸນ, ຈະມາກັບພຣະອົງ, ແລະ ຈະຫຸ້ມ*ຫໍ່ດ້ວຍລັດສະໝີພາບຂອງພຣະອົງຢູ່ໃນເມກ, ຢູ່ທາງເບື້ອງຂວາພຣະຫັດຂອງບຸດມະນຸດ.*

**ປຈສ, ມາຣະໂກ 9:3.** ປຽບທຽບໃສ່ກັບ ມາຣະໂກ 9:4

ໂຢຮັນບັບຕິສະໂຕ ໄດ້ຢູ່ເທິງພູແຫ່ງການປ່ຽນສະພາບ.

3 ແລະ ອີລາຍ ແລະ ໂມເຊ ໄດ້ປະກົດຕົວຕໍ່ ເຂົາເຈົ້າ, *ຫລື ອີກຄຳໜຶ່ງ, ໂຢຮັນບັບຕິ*

*ສະໂຕ ແລະ ໂມເຊ;* ແລະ ພວກເພິ່ນກຳລັງ
ສົນທະນາຢູ່ກັບພຣະເຢຊູ.

**ປຈສ, ມາຣະໂກ 9:40–48.** ປຽບທຽບໃສ່
ກັບ ມາຣະໂກ 9:43–48

ພຣະເຢຊູປຽບທຽບການຕັດມື ຫລື ຕັດຕີນຂ້າງໜຶ່ງ
ອອກ ໃສ່ກັບການຕັດຄວາມສຳພັນທີ່ອາດພາຫລົງ
ທາງໄປ.

40 *ສະນັ້ນ,* ຖ້າ ມື ຂອງ ພວກ ເຈົ້າ ເຮັດ
ຄວາມຜິດຕໍ່ພວກເຈົ້າ, ໃຫ້ຕັດມັນຖິ້ມ; *ຫລື
ຖ້າຫາກພີ່ນ້ອງຂອງພວກເຈົ້າເຮັດຄວາມ
ຜິດຕໍ່ພວກເຈົ້າ ແລະ ບໍ່ຍອມສາລະພາບ
ແລະ ບໍ່ຍອມເຊົາ, ເຂົາຈະຖືກຕັດອອກ.*
ການທີ່ພວກເຈົ້າ ຈະເຂົ້າມາສູ່ຊີວິດຢ່າງ
ຄົນມືກຸດ ກໍດີກວ່າການລົງໄປນະລົກພ້ອມ
ດ້ວຍມືທັງສອງຂ້າງ.
41 *ການທີ່ພວກເຈົ້າເຂົ້າມາສູ່ຊີວິດປາດ
ສະຈາກພີ່ນ້ອງຂອງພວກເຈົ້າ ກໍດີກວ່າ
ພວກເຈົ້າ ແລະ ພີ່ນ້ອງຂອງພວກເຈົ້າ ຖືກ
ໂຍນລົງໄປນະລົກນຳກັນ;* ລົງໄປໃນໄຟຊຶ່ງ
ມອດບໍ່ເປັນຈັກເທື່ອ, ບ່ອນທີ່ໂຕໜອນບໍ່ຮູ້
ຕາຍ, ແລະ ໄຟບໍ່ຮູ້ມອດຈັກເທື່ອ.
42 ແລະ *ອີກເທື່ອໜຶ່ງ,* ຖ້າຕີນຂອງພວກ
ເຈົ້າເຮັດຄວາມຜິດຕໍ່ພວກເຈົ້າ, ໃຫ້ຕັດມັນ
ຖິ້ມ; *ເພາະຄົນໃດເປັນມາດຕະຖານຂອງ
ພວກເຈົ້າ, ຄົນນັ້ນແຫລະທີ່ພວກເຈົ້າຈະ
ເດີນຕາມ, ຖ້າເຂົາກາຍເປັນຜູ້ລ່ວງລະເມີດ,
ເຂົາຈະຖືກຕັດອອກ.*
43 ການທີ່ພວກເຈົ້າເຂົ້າມາສູ່ຊີວິດຢ່າງ
ຄົນພິການ ກໍດີກວ່າຕີນທັງສອງເບື້ອງຂອງ
ພວກເຈົ້າ ຖືກໂຍນລົງໄປນະລົກ; ລົງໄປໃນ
ໄຟທີ່ບໍ່ຮູ້ມອດຈັກເທື່ອ.
44 *ສະນັ້ນ, ຂໍໃຫ້ຢືນຢູ່ ຫລື ຕົກໄປດ້ວຍ
ຕົນເອງ, ແລະ ບໍ່ແມ່ນເພື່ອຄົນອື່ນ; ຫລື ບໍ່
ເຊື່ອຄົນອື່ນ.*
45 *ຈົ່ງທູນຖາມພຣະບິດາຂອງເຮົາ, ແລະ
ມັນຈະເກີດຂຶ້ນເອງວ່າພວກເຈົ້າຈະທູນຂໍ
ສິ່ງໃດໃນເວລານັ້ນ, ຖ້າຫາກພວກເຈົ້າທູນ
ຂໍດ້ວຍສັດທາ, ໂດຍເຊື່ອວ່າຈະໄດ້ຮັບ.*
46 ແລະ ຖ້າຫາກດວງຕາຂອງພວກເຈົ້າ
*ຊຶ່ງມອງເຫັນແທນພວກເຈົ້າ, ຄົນທີ່ຖືກແຕ່ງ
ຕັ້ງໃຫ້ດູແລພວກເຈົ້າ ເພື່ອເຮັດໃຫ້ພວກ
ເຈົ້າເຫັນແສງສະຫວ່າງ, ກາຍເປັນຜູ້ລ່ວງ
ລະເມີດ ແລະ* ເຮັດຄວາມຜິດຕໍ່ພວກເຈົ້າ,
ຈົ່ງຕັດ*ເຂົາ*ອອກ.
47 ການທີ່ພວກເຈົ້າເຂົ້າໄປໃນອານາຈັກ
ຂອງພຣະເຈົ້າ, ດ້ວຍຕາໜ່ວຍດຽວ, ກໍດີ
ກວ່າຕາທັງສອງໜ່ວຍຖືກໂຍນລົງໃນໄຟ
ນະລົກ.
48 *ເພາະການທີ່ພວກເຈົ້າເອງຈະລອດ
ກໍດີກວ່າຖືກໂຍນລົງນະລົກກັບພີ່ນ້ອງຂອງ
ພວກເຈົ້າ,* ບ່ອນທີ່ໜອນຂອງພວກເຂົາບໍ່ຮູ້
ຕາຍ ແລະ ໄຟບໍ່ຮູ້ມອດຈັກເທື່ອ.

**ປຈສ, ມາຣະໂກ 12:32.** ປຽບທຽບໃສ່
ກັບ ມາຣະໂກ 12:27

ພຣະເຈົ້າບໍ່ແມ່ນພຣະເຈົ້າຂອງຄົນຕາຍ, ເພາະພຣະ
ອົງໂຜດຄົນຕາຍຈາກຫລຸມສົບຂອງພວກເຂົາ.

32 *ສະນັ້ນ* ພຣະອົງບໍ່ໄດ້ເປັນພຣະເຈົ້າ
ຂອງຄົນຕາຍ, ແຕ່ເປັນພຣະເຈົ້າຂອງຄົນ
ເປັນ; *ເພາະພຣະອົງໄດ້ໂຜດພວກເຂົາຈາກ
ຫລຸມສົບຂອງພວກເຂົາ.* ສະນັ້ນ ພວກເຈົ້າ
ຫລົງຜິດໄປຢ່າງໝົດສິ້ນ.

**ປຈສ, ມາຣະໂກ 14:20–26.** ປຽບທຽບ
ໃສ່ກັບ ມາຣະໂກ 14:22–25

ພຣະເຢຊູຈັດຕັ້ງສິນລະລຶກ ໃນການລະນຶກເຖິງພຣະ
ກາຍ ແລະ ໂລຫິດຂອງພຣະອົງ.

20 ແລະ ໃນ ຂະນະທີ່ເຂົາເຈົ້າຮັບ
ປະທານອາຫານ, ພຣະເຢຊູໄດ້ຢິບເອົາເຂົ້າ
ຈີ່ຂຶ້ນມາ ແລະ ອວຍພອນມັນ, ແລະ ຫັກ
ມັນເປັນປ່ຽງໆ, ແລະ ມອບມັນໃຫ້ເຂົາເຈົ້າ,

ແລະ ກ່າວວ່າ ຈົ່ງຮັບເອົາ, *ແລະ ກິນມັນ.*
21 *ຈົ່ງ ເບິ່ງ, ໃຫ້ພວກເຈົ້າເຮັດສິ່ງນີ້ ໃນ
ການລະນຶກເຖິງເນື້ອກາຍຂອງເຮົາ; ເພາະ
ເມື່ອພວກ ເຈົ້າເຮັດ ສິ່ງ ນີ້ ເລື້ອຍ ເທົ່າ ໃດ
ພວກເຈົ້າຈະຈື່ຈຳຊົ່ວໂມງນີ້ ທີ່ເຮົາໄດ້ຢູ່ກັບ
ພວກເຈົ້າ.*
22 ແລະ ພຣະອົງໄດ້ຍົກຈອກຂຶ້ນ, ແລະ
ເມື່ອພຣະອົງໄດ້ຂອບພຣະໄທແລ້ວ, ພຣະ
ອົງໄດ້ຍື່ນມັນໃຫ້ເຂົາເຈົ້າ; ແລະ ເຂົາເຈົ້າ
ໄດ້ດື່ມຈາກຈອກນັ້ນ.
23 ແລະ ພຣະອົງໄດ້ກ່າວກັບເຂົາເຈົ້າວ່າ
ນີ້ເປັນ*ການລະນຶກເຖິງ*ເລືອດຂອງເຮົາ ຊຶ່ງ
ເຮົາໄດ້ຫລັ່ງເພື່ອຫລາຍຄົນ, *ແລະ ພັນທະ
ສັນ ຍາ ໃໝ່ ຊຶ່ງເຮົາມອບ ໃຫ້ພວກ ເຈົ້າ;
ເພາະພວກເຈົ້າຈະເປັນພະຍານເຖິງເຮົາຕໍ່
ທົ່ວໂລກ.*
24 *ແລະ ເມື່ອພວກເຈົ້າເຮັດພິທີການນີ້
ເລື້ອຍ ເທົ່າ ໃດ, ພວກເຈົ້າຈະຈື່ຈຳຊົ່ວໂມງ
ນີ້ ທີ່ເຮົາໄດ້ຢູ່ກັບພວກເຈົ້າ ແລະ ໄດ້ດື່ມ
ກັບພວກເຈົ້າຈາກຈອກນີ້, ແມ່ນແຕ່ຄັ້ງສຸດ
ທ້າຍໃນການປະຕິບັດສາດສະໜາກິດຂອງ
ເຮົາ.*
25 ແທ້ຈິງແລ້ວ ເຮົາກ່າວກັບພວກເຈົ້າ
ວ່າ *ພວກເຈົ້າຈະເປັນພະຍານເຖິງເລື່ອງນີ້;
ເພາະ*ເຮົາຈະບໍ່ດື່ມຜົນຂອງອະງຸ່ນ*ກັບພວກ
ເຈົ້າ*ອີກ, ຈົນກວ່າເຖິງວັນນັ້ນ ວັນທີ່ເຮົາຈະ
ດື່ມຜົນໃໝ່ໃນອານາຈັກຂອງພຣະເຈົ້າ.
26 *ແລະ ບັດ ນີ້ ເຂົາ ເຈົ້າໄດ້ໂສກເສົ້າ,
ແລະ ໄດ້ຮ້ອງໄຫ້ນຳພຣະອົງ.*

**ປຈສ, ມາຣະໂກ 14:36–38.** ປຽບທຽບ
ໃສ່ກັບ ມາຣະໂກ 14:32–34

ຢູ່ເຄັດເຊມາເນ, ແມ່ນແຕ່ອັກຄະສາວົກສິບສອງ ບໍ່
ເຂົ້າໃຈຄັກແນ່ເຖິງບົດບາດຂອງຂອງພຣະຄຣິດ ໃນ
ຖານະເປັນພຣະເມຊີອາ.

36 ແລະ ເຂົາເຈົ້າໄດ້ມາເຖິງສະຖານທີ່
ແຫ່ງໜຶ່ງ ທີ່ເອີ້ນວ່າ ເຄັດເຊມາເນ, *ຊຶ່ງເປັນ
ສວນ; ແລະ ສານຸສິດໄດ້ເລີ່ມກັງວົນໃຈຢ່າງ
ໜັກ, ແລະ ໜັກໃຈຫລາຍ, ແລະ ເລີ່ມຈົ່ມຢູ່
ໃນໃຈ, ສົງໄສວ່າ ນີ້ຄືພຣະເມຊີອາຫລືບໍ່.*
37 *ແລະ ພຣະ ເຢຊູ ໂດຍ ທີ່ ຮູ້ ຈັກເຖິງ
ຄວາມໃນໃຈຂອງເຂົາເຈົ້າ, ໄດ້ກ່າວກັບ*ສາ
ນຸສິດວ່າ ຈົ່ງນັ່ງຢູ່ບ່ອນນີ້, ໃນຂະນະທີ່ເຮົາ
ອະທິຖານ.
38 ແລະ ພຣະອົງໄດ້ພາເປໂຕ, ແລະ ຢາ
ໂກໂບ, ແລະ ໂຢຮັນ ໄປກັບພຣະອົງ, *ແລະ
ພຣະອົງໄດ້ຕິຕຽນເຂົາເຈົ້າ,* ແລະ ໄດ້ກ່າວ
ກັບເຂົາເຈົ້າວ່າ ຈິດວິນຍານຂອງເຮົາໂສກ
ເສົ້າຫລາຍ, *ແມ່ນແຕ່*ຈົນເຖິງຕາຍ; ໃຫ້
ພວກເຈົ້າລໍຖ້າຢູ່ນີ້ ແລະ ຄອຍເຝົ້າລະວັງ.

**ປຈສ, ມາຣະໂກ 16:3–6.** ປຽບທຽບໃສ່
ກັບ ມາຣະໂກ 16:4–7;
ລູກາ 24:2–4

ທູດສອງອົງໄດ້ທັກທາຍພວກຜູ້ຍິງທີ່ອຸບມຸງຂອງ
ພຣະຜູ້ຊ່ວຍໃຫ້ລອດ.

3 *ແຕ່*ເມື່ອພວກນາງໄດ້ຫລຽວເບິ່ງ, ພວກ
ນາງໄດ້ເຫັນວ່າ ກ້ອນຫີນໄດ້ຖືກກິ້ງອອກ
ໄປແລ້ວ, (ເພາະມັນໃຫຍ່ຫລາຍ,) *ແລະ
ທູດສອງອົງໄດ້ນັ່ງຢູ່ເທິງນັ້ນ,* ນຸ່ງຊຸດສີຂາວ;
ແລະ ພວກນາງໄດ້ເກີດຄວາມຢ້ານກົວ.
4 *ແຕ່ທູດ ໄດ້ກ່າວ*ແກ່ພວກນາງວ່າ ຢ່າສູ່
ຢ້ານ; ພວກເຈົ້າຊອກຫາພຣະເຢຊູແຫ່ງນາຊາ
ເຣັດ, ຜູ້ໄດ້ຖືກຄຶງ; ພຣະອົງໄດ້ຟື້ນຄືນພຣະຊົນ
ແລ້ວ; ພຣະອົງບໍ່ໄດ້ປະທັບຢູ່ບ່ອນນີ້; ຈົ່ງເບິ່ງ
ບ່ອນທີ່ພວກເຂົາໄດ້ວາງພຣະອົງໄວ້;
5 *ແລະ* ຈົ່ງໄປຕາມທາງຂອງພວກເຈົ້າ,
ຈົ່ງໄປບອກສານຸສິດຂອງພຣະອົງ ແລະ
ເປໂຕ, ວ່າພຣະອົງໄດ້ສະເດັດໄປກ່ອນ
ພວກເຈົ້າ ເຂົ້າໄປໃນຄາລິເລ; ຢູ່ທີ່ນັ້ນ
ພວກເຈົ້າຈະເຫັນພຣະອົງ ຕາມທີ່ພຣະອົງ
ໄດ້ບອກພວກເຈົ້າ.

6 *ແລະ ພວກນາງໄດ້ເຂົ້າໄປໃນອຸບມຸງ, ເຫັນບ່ອນທີ່ພວກເຂົາໄດ້ວາງພຣະເຢຊູ.*

**ປຈສ, ລູກາ 1:8.** ປຽບທຽບໃສ່ກັບ ລູກາ 1:8

ຊາຂາຣີຢາ, ບິດາຂອງໂຢຮັນບັບຕິສະໂຕ, ປະຕິບັດໜ້າທີ່ຂອງຖານະປະໂລຫິດ.

8 ແລະ ໃນຂະນະທີ່ລາວເຮັດໜ້າທີ່ປະໂລຫິດຂອງລາວຢູ່ຕໍ່ພຣະພັກຂອງພຣະເຈົ້າ, ໃນລະບຽບຂອງ*ຖານະປະໂລຫິດ*ຂອງລາວ,

**ປຈສ, ລູກາ 2:46.** ປຽບທຽບໃສ່ກັບ ລູກາ 2:46

ພວກອາຈານຢູ່ໃນພຣະວິຫານກຳລັງຟັງພຣະເຢຊູ ແລະ ຖາມພຣະອົງ.

46 ແລະ ເຫດການໄດ້ບັງເກີດຂຶ້ນ, ຫລັງຈາກສາມມື້ ເຂົາເຈົ້າໄດ້ພົບເຫັນພຣະອົງຢູ່ໃນພຣະວິຫານ, ນັ່ງຢູ່ທ່າມກາງພວກອາຈານ, *ແລະ ພວກເຂົາ*ກຳລັງຟັງ*ພຣະອົງ*, ແລະ ຖາມ*ພຣະອົງ*ຢູ່.

**ປຈສ, ລູກາ 3:4–11.** ປຽບທຽບໃສ່ກັບ ລູກາ 3:4–6

ພຣະຄຣິດຈະສະເດັດມາຕາມຄຳທຳນາຍ ເພື່ອນຳຄວາມລອດມາສູ່ຊາວອິດສະຣາເອນ ແລະ ຄົນຕ່າງຊາດ. ໃນຄວາມສົມບູນແຫ່ງເວລາ, ພຣະອົງຈະສະເດັດມາອີກ ເພື່ອພິພາກສາໂລກ.

4 ຕາມທີ່ມີຂຽນໄວ້ໃນໜັງສືຂອງ*ສາດສະດາ*ເອຊາອັດ; *ແລະ ນີ້ຄືຖ້ອຍຄຳ* ກ່າວວ່າ, ສຽງຂອງຄົນຮ້ອງປະກາດຢູ່ໃນຖິ່ນແຫ້ງແລ້ງກັນດານວ່າ ຈົ່ງຕຽມທາງຂອງພຣະຜູ້ເປັນເຈົ້າ, ແລະ ເຮັດໃຫ້ທາງຂອງພຣະອົງຊື່ຕົງ.

5 *ເພາະຈົ່ງເບິ່ງ, ແລະ ແລ້ວ, ພຣະອົງຈະສະເດັດມາ, ດັ່ງທີ່ມີຂຽນໄວ້ໃນໜັງສືຂອງສາດສະດາ, ເພື່ອຍົກເອົາບາບຂອງໂລກໄປ, ແລະ ເພື່ອນຳຄວາມລອດມາສູ່ປະຊາຊາດນອກສາດສະໜາ, ເພື່ອເຕົ້າໂຮມຄົນທີ່ຫາຍສາບສູນໄປ, ຜູ້ທີ່ເປັນຂອງຝູງແກະຂອງອິດສະຣາເອນ;*

6 *ແທ້ຈິງແລ້ວ, ແມ່ນແຕ່ຜູ້ທີ່ໄດ້ກະຈັດຈະກາຍໄປ ແລະ ຜູ້ເປັນທຸກ; ແລະ ເພື່ອຕຽມທາງ, ແລະ ເຮັດໃຫ້ການສິດສອນພຣະກິດຕິຄຸນຕໍ່ຄົນຕ່າງຊາດເປັນໄປໄດ້;*

7 *ແລະ ເພື່ອເປັນຄວາມສະຫວ່າງຕໍ່ຄົນທັງປວງທີ່ນັ່ງຢູ່ໃນຄວາມມືດ, ໄປສູ່ບ່ອນທີ່ໄກສຸດຂອງແຜ່ນດິນໂລກ; ເພື່ອເຮັດໃຫ້ເກີດການຟື້ນຄືນຊີວິດຈາກບັນດາຄົນຕາຍ, ແລະ ເພື່ອຂຶ້ນໄປເບື້ອງບົນ, ເພື່ອຢູ່ທາງເບື້ອງຂວາພຣະຫັດຂອງພຣະບິດາ,*

8 *ຈົນກວ່າຄວາມສົມບູນແຫ່ງເວລາ, ແລະ ກົດ ແລະ ປະຈັກພະຍານຈະໄດ້ຮັບການຜະນຶກ, ແລະ ຂໍກະແຈຂອງອານາຈັກຈະຖືກຖວາຍແດ່ພຣະບິດາອີກເທື່ອໜຶ່ງ;*

9 *ເພື່ອປະຕິບັດຄວາມຍຸດຕິທຳຕໍ່ຜູ້ຄົນທັງປວງ; ເພື່ອສະເດັດລົງມາໃນການພິພາກສາຜູ້ຄົນທັງປວງ, ແລະ ເພື່ອໃຫ້ຜູ້ຄົນທັງປວງຍອມຮັບການກະທຳທີ່ອະທຳທັງໝົດຂອງພວກເຂົາ, ຊຶ່ງພວກເຂົາໄດ້ເຮັດ; ແລະ ທັງໝົດນີ້ ໃນວັນທີ່ພຣະອົງຈະສະເດັດມາ;*

10 *ເພາະມັນເປັນວັນແຫ່ງອຳນາດ; ແທ້ຈິງແລ້ວ,* ຫ່ອມພູທຸກບ່ອນຈະເຕັມ, ພູ ແລະ ຄ້ອຍພູທຸກໜ່ວຍຈະຖືກເຮັດໃຫ້ຕ່ຳລົງ; ທີ່ນທາງທີ່ຄົດລ້ຽວຈະຖືກເຮັດໃຫ້ຊື່, ແລະ ທາງທີ່ມີຕໍແຂງຈະຖືກເຮັດໃຫ້ກ້ຽງດີ;

11 ແລະ ຜູ້ຄົນທັງປວງຈະເຫັນຄວາມລອດຂອງພຣະເຈົ້າ.

**ປຈສ, ລູກາ 3:19–20.** ປຽບທຽບໃສ່ກັບ ລູກາ 3:10–13

ຄົນຍາກຈົນຕ້ອງໄດ້ຮັບການດູແຈຈາກກົມການຄັງ

ທີ່ມີຢ່າງອຸດົມສົມບູນ. ຄົນເກັບພາສີ ບໍ່ຄວນເກັບພາສີເກີນອັດຕາ.

19 *ເພາະມັນເປັນທີ່ຮູ້ຈັກກັນດີແກ່ພວກເຈົ້າວ່າ, ທ່ານເທໂອຟີເລ, ຕາມ ລະບຽບຂອງຊາວຢິວ, ແລະ ຕາມຮີດຄອງຂອງກົດຂອງພວກເຂົາ ເລື່ອງການຮັບເງິນເຂົ້າໄວ້ໃນຄັງ, ວ່າຕາມຄວາມອຸດົມສົມບູນທີ່ພວກເຂົາໄດ້ຮັບ, ຄວນຖືກກຳນົດໃຫ້ຄົນຍາກຈົນ, ທຸກຄົນຕາມທີ່ເຂົາຄວນໄດ້ຮັບ;*

20 *ແລະ ຄົນເກັບພາສີກໍຄວນເຮັດເຊັ່ນນີ້ເໝືອນກັນ, ດັ່ງນັ້ນ* ໂຢຮັນຈຶ່ງໄດ້ກ່າວກັບພວກເຂົາວ່າ, ຢ່າໄດ້ເກັບພາສີເກີນອັດຕາ.

**ປຈສ, ລູກາ 6:29–30.** ປຽບທຽບໃສ່ກັບ ລູກາ 6:29–30

ພຣະເຢຊູສອນວ່າ ມັນເປັນການດີກວ່າທີ່ຈະອົດທົນກັບການຂົ່ມເຫັງ ແທນທີ່ຈະຕໍ່ສູ້ກັບສັດຕູ.

29 ແລະ ຖ້າຜູ້ໃດຕົບແກ້ມເຈົ້າເບື້ອງໜຶ່ງ, ຈົ່ງປິ່ນໃຫ້ເຂົາຕົບອີກເບື້ອງໜຶ່ງ; *ຫລື, ໃນອີກຄຳໜຶ່ງ, ມັນເປັນການດີກວ່າທີ່ຈະປິ່ນໃຫ້ເຂົາຕົບອີກເບື້ອງໜຶ່ງ, ແທນທີ່ຈະດ່າຄືນ.* ແລະ ຖ້າຜູ້ໃດຍາດເອົາເສື້ອຊັ້ນນອກຂອງເຈົ້າໄປ, ຖ້າເຂົາຈະເອົາເສື້ອຊັ້ນໃນກໍຢ່າຫວງຫ້າມ.

30 *ເພາະມັນເປັນການດີກວ່າທີ່ຈະອົດທົນກັບສັດຕູຂອງເຈົ້າ ເພື່ອປ່ອຍໃຫ້ເຂົາເອົາສິ່ງຂອງເຫລົ່ານັ້ນໄປ, ແທນທີ່ຈະຕໍ່ສູ້ກັບເຂົາ. ແທ້ຈິງແລ້ວ ເຮົາກ່າວກັບເຈົ້າວ່າ, ພຣະບິດາເທິງສະຫວັນຂອງເຈົ້າ ຜູ້ເຫັນເຈົ້າຢູ່ໃນບ່ອນລັບ, ຈະນຳຄົນຊົ່ວຄົນນັ້ນມາສູ່ການພິພາກສາ.*

**ປຈສ, ລູກາ 9:24–25.** ປຽບທຽບໃສ່ກັບ ລູກາ 9:24–25

ການມີຄວາມລ້ຳລວຍຢູ່ໃນໂລກ ແຕ່ສູນເສຍຈິດວິນຍານຂອງຕົນໄປ ຈະໄດ້ປະໂຫຍດອັນໃດ.

24 ເພາະຜູ້ໃດກໍຕາມທີ່ຢາກຮັກສາຊີວິດຂອງຕົນໄວ້ໃຫ້ລອດ, *ຜູ້ນັ້ນຕ້ອງຍອມທີ່*ຈະສະລະຊີວິດຂອງຕົນ*ເພື່ອເຫັນແກ່ເຮົາ; ແລະ ຜູ້ໃດກໍຕາມຈະຍອມເສຍຊີວິດຂອງ*ຕົນເພື່ອເຫັນແກ່ເຮົາ, ຜູ້ນັ້ນຈະຊ່ວຍຊີວິດຂອງຕົນໃຫ້ພົ້ນໄດ້.

25 ເພາະ*ຈະໄດ້ປະໂຫຍດ*ອັນໃດຖ້າເຂົາໄດ້ສິ່ງຂອງທັງໂລກ, *ແຕ່ເຂົາບໍ່ໄດ້ຮັບເອົາພຣະອົງ ຜູ້ທີ່ພຣະເຈົ້າໄດ້ແຕ່ງຕັ້ງ, ແລະ ເຂົາສູນເສຍຈິດວິນຍານຂອງຕົນ, ແລະ ຕົວເຂົາເອງຖືກຂັບໄລ່ອອກໄປ?*

**ປຈສ, ລູກາ 11:53.** ປຽບທຽບໃສ່ກັບ ລູກາ 11:52

ຄວາມສົມບູນຂອງພຣະຄຳພີຄືຂໍກະແຈແຫ່ງຄວາມຮູ້.

53 ວິບັດແກ່ເຈົ້າ, ພວກທຳບັນດິດເອີຍ! ເພາະພວກເຈົ້າໄດ້ເອົາກະແຈທີ່ໄຂໄປສູ່ຄວາມຮູ້ໄວ້, *ຄວາມສົມບູນຂອງພຣະຄຳພີ; ພວກເຈົ້າເອງກໍບໍ່ໄດ້ເຂົ້າໄປໃນອານາຈັກ;* ແລະ *ຄົນທີ່*ພະຍາຍາມຈະເຂົ້າໄປ, ພວກເຈົ້າຊ້ຳພັດຂັດຂວາງໄວ້.

**ປຈສ, ລູກາ 12:9–12.** ປຽບທຽບໃສ່ກັບ ລູກາ 12:9–10; ເບິ່ງ ປຈສ, ມັດທາຍ 12:37–38 ແລະ ຄພ 132:26–27 ນຳອີກ

ພຣະເຢຊູອະທິບາຍວ່າ ການໝິ່ນປະໝາດພຣະວິນຍານບໍລິສຸດ ຈະບໍ່ໄດ້ຮັບການໃຫ້ອະໄພ.

9 ແຕ່ຄົນ*ທີ່*ປະຕິເສດ ເຮົາຕໍ່ໜ້າຜູ້ຄົນ, ຈະຖືກປະຕິເສດຕໍ່ໜ້າເຫລົ່າທູດຂອງພຣະເຈົ້າ.

10 *ບັດນີ້ ສານຸສິດຂອງພຣະອົງຮູ້ວ່າພຣະອົງໄດ້ກ່າວເລື່ອງນີ້, ເພາະເຂົາເຈົ້າໄດ້ກ່າວຄຳບໍ່ດີໃຫ້ພຣະອົງຕໍ່ໜ້າຜູ້ຄົນ, ເພາະເຂົາເຈົ້າບໍ່ກ້າຍອມຮັບພຣະອົງຕໍ່ໜ້າມະນຸດ.*

11 *ແລະ ເຂົາເຈົ້າໄດ້ຫາເຫດຜົນໃນທ່າມ
ກາງເຂົາເຈົ້າເອງ, ກ່າວວ່າ, ພຣະອົງຮູ້ຈັກ
ຄວາມໃນໃຈຂອງພວກເຮົາ, ແລະ ພຣະອົງ
ໄດ້ກ່າວເຖິງການກ່າວໂທດຂອງພວກເຮົາ,
ແລະ ພວກເຮົາຈະບໍ່ໄດ້ຮັບການໃຫ້ອະໄພ.
ແຕ່ພຣະອົງໄດ້ຕອບເຂົາເຈົ້າ, ແລະ ກ່າວ
ກັບເຂົາເຈົ້າວ່າ,*

12 ຜູ້ ໃດ ກໍ ຕາມ ທີ່ ຈະ ກ່າວ ຕ້ານ ບຸດ
ມະນຸດ, ແລະ *ກັບໃຈ,* ເຂົາຈະໄດ້ຮັບການ
ໃຫ້ອະໄພ; ແຕ່ກັບຄົນ*ທີ່*ໝິ່ນປະໝາດພຣະ
ວິນຍານບໍລິສຸດ, ເຂົາຈະບໍ່ໄດ້ຮັບການໃຫ້
ອະໄພ.

**ປຈສ, ລູກາ 12:41–57.** ປຽບທຽບໃສ່
ກັບ ລູກາ 12:37–48

ພຣະເຢຊູສອນວ່າ ຜູ້ຮັບໃຊ້ຂອງພຣະອົງຈະຕ້ອງ
ຕຽມພ້ອມສະເໝີສຳລັບການສະເດັດມາຂອງ
ພຣະອົງ.

41 *ເພາະ, ຈົ່ງເບິ່ງ, ພຣະອົງຈະສະເດັດ
ມາ ໃນ ຍາມທຳອິດ ຂອງ ກາງ ຄືນ, ແລະ
ພຣະອົງຈະສະເດັດມາໃນຍາມທີສອງນຳ
ອີກ, ແລະ ພຣະອົງຈະສະເດັດມາໃນຍາມ
ທີສາມນຳອີກ.*

42 *ແລະ ຕາມຈິງແລ້ວ ເຮົາກ່າວກັບພວກ
ເຈົ້າວ່າ, ພຣະອົງໄດ້ສະເດັດມາແລ້ວ, ດັ່ງ
ທີ່ມີຂຽນໄວ້ເຖິງພຣະອົງ; ແລະ ອີກເທື່ອ
ເມື່ອ*ພຣະອົງຈະສະເດັດມາໃນຍາມທີສອງ,
ຫລື ມາໃນຍາມທີສາມ, ຜູ້ຮັບໃຊ້ເຫລົ່ານັ້ນ
ຈະໄດ້ຮັບພອນ*ເມື່ອພຣະອົງສະເດັດມາ,* ຜູ້
*ທີ່ພຣະອົງຈະພົບວ່າເຮັດເຊັ່ນນີ້;*

43 *ເພາະເຈົ້ານາຍຂອງຜູ້ຮັບໃຊ້ເຫລົ່າ
ນັ້ນ* ຈະຄາດແອວ, ແລະ ເຮັດໃຫ້*ພວກເຂົາ
ນັ່ງລົງກິນອາຫານ,* ແລະ ຈະອອກມາ ແລະ
*ຮັບໃຊ້ພວກເຂົາ.*

44 *ແລະ ບັດນີ້, ຕາມຈິງແລ້ວ ເຮົາກ່າວ
ສິ່ງເຫລົ່ານີ້ກັບພວກເຈົ້າ, ເພື່ອພວກເຈົ້າຈະ
ຮູ້ເລື່ອງນີ້, ວ່າການສະເດັດມາຂອງພຣະ
ຜູ້ເປັນເຈົ້າ* ຈະເປັນເໝືອນດັ່ງຂະໂມຍໃນ
*ຍາມກາງຄືນ.*

45 *ແລະ ສິ່ງນີ້ເປັນເໝືອນດັ່ງຊາຍຄົນ
ໜຶ່ງທີ່ເປັນເຈົ້າຂອງເຮືອນ, ຜູ້ຊຶ່ງຖ້າລາວບໍ່
ເຝົ້າຊັບສິນຂອງລາວ, ຂະໂມຍຈະມາໃນ
ໂມງທີ່ລາວບໍ່ຄາດຄິດ, ແລະ ເອົາຊັບສິນ
ຂອງລາວໄປ, ແລະ ແບ່ງປັນກັນໃນກຸ່ມ
ພວກເຂົາ.*

46 *ແລະ ເຂົາເຈົ້າໄດ້ກ່າວໃນທ່າມກາງ
ເຂົາເຈົ້າເອງວ່າ* ຖ້າຫາກເຈົ້າຂອງເຮືອນ
ຮູ້ວ່າ ຂະໂມຍຈະມາໃນໂມງໃດ, ລາວຄົງ
ຄອຍເຝົ້າຍາມ, ແລະ ບໍ່ຍອມໃຫ້ຂະໂມຍ
ເຂົ້າມາໃນບ້ານຂອງລາວ *ແລະ ສູນເສຍ
ຊັບສິນຂອງລາວໄປ.*

47 *ແລະ ພຣະອົງໄດ້ກ່າວກັບພວກເຂົາ,
ຕາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ*
ສະນັ້ນພວກເຈົ້າຈົ່ງຕຽມພ້ອມຄືກັນ; ເພາະ
ບຸດມະນຸດຈະສະເດັດມາໃນໂມງທີ່ພວກ
ເຈົ້າບໍ່ຄາດຄິດ.

48 ຈາກນັ້ນ ເປໂຕໄດ້ກ່າວກັບພຣະອົງ
ວ່າ, ພຣະອົງເຈົ້າເອີຍ, ທ່ານຍົກຄຳອຸປະມາ
ນີ້ຂຶ້ນມາ ເພື່ອໝາຍເຖິງພວກຂ້ານ້ອຍ, ຫລື
ໝາຍເຖິງທຸກໆຄົນ?

49 ແລະ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ *ເຮົາ
ກ່າວກັບຜູ້ທີ່ພຣະຜູ້ເປັນເຈົ້າຈະ* ແຕ່ງຕັ້ງ
ໃຫ້ເປັນ*ຜູ້ເບິ່ງແຍງ*ຄອບຄົວຂອງພຣະອົງ,
ເພື່ອແຈກຈ່າຍອາຫານໃຫ້*ລູກໆຂອງພຣະ
ອົງ*ຕາມເວລາ.

50 *ແລະ ເຂົາເຈົ້າໄດ້ກ່າວວ່າ ແມ່ນໃຜທີ່
ເປັນຜູ້ຮັບໃຊ້ທີ່ຊື່ສັດ ແລະ ສະຫລາດ?*

51 *ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບ
ພວກເຂົາວ່າ ກໍແມ່ນຜູ້ຮັບໃຊ້ທີ່ເບິ່ງແຍງ,
ທີ່ ແຈກ ຈ່າຍ ອາຫານຂອງລາວຕາມ
ເວລາ.*

52 ຜູ້ ຮັບ ໃຊ້ ຄົນ ນັ້ນ *ທີ່ພຣະ ຜູ້ ເປັນ*

*ເຈົ້າຂອງ* ລາວ ພົບ ເຫັນ ວ່າ ລາວ ເຮັດ ເຊັ່ນ
ນັ້ນ ຈະ *ໄດ້*ຮັບພອນ.

53 ໂດຍແທ້ແລ້ວ ເຮົາກ່າວກັບພວກເຈົ້າ
ວ່າ ພຣະອົງຈະເຮັດໃຫ້ລາວເປັນຜູ້ດູແລ
ທຸກສິ່ງທີ່ພຣະອົງມີ.

54 *ແຕ່ຜູ້ຮັບໃຊ້ທີ່ຊົ່ວຮ້າຍຄື ຜູ້ທີ່ພົບວ່າ*
*ບໍ່ໄດ້ເບິ່ງແຍງ. ແລະ ຖ້າຜູ້ຮັບໃຊ້ຄົນນັ້ນ*
*ຖືກພົບວ່າບໍ່ໄດ້ເບິ່ງແຍງ,* ລາວຈະກ່າວຢູ່
ໃນໃຈວ່າ, ເຈົ້ານາຍຂອງຂ້າພະເຈົ້າຄົງຈະ
ມາຊ້າ; ແລະ ຈະເລີ່ມຕີຜູ້ຮັບໃຊ້ຄົນອື່ນໆ,
ແລະ ສາວໃຊ້ທັງໝົດ, ແລະ ກິນ, ແລະ ດື່ມ,
ແລະ ເມົາເຫລົ້າ.

55 *ເຈົ້ານາຍຂອງ*ຜູ້ຮັບໃຊ້ຄົນນັ້ນ ຈະມາ
ໃນວັນທີ່ລາວບໍ່ຄອຍເຝົ້າ, ແລະ ໃນໂມງ
ທີ່ລາວບໍ່ຄາດຄິດ, ແລະ ຈະ*ລົງໂທດ*ລາວ,
ແລະ ຈະກຳນົດສ່ວນທີ່ຈະມອບໃຫ້ແກ່
ລາວ ກັບຄົນທີ່ບໍ່ເຊື່ອ.

56 ແລະ ຜູ້ຮັບໃຊ້ຄົນນັ້ນທີ່ໄດ້ຮູ້ຄວາມ
ປະສົງ*ຂອງເຈົ້ານາຍຂອງ*ລາວ, ແລະ
ບໍ່ໄດ້ຕຽມຕົວຮັບ*ການກັບມາຂອງເຈົ້າ*
*ນາຍຂອງລາວ,* ທັງບໍ່ໄດ້ເຮັດຕາມຄວາມ
ປະສົງຂອງເຈົ້ານາຍ, ຈະຖືກຂ້ຽນຕີ
ຫລາຍເທື່ອ.

57 ແຕ່ ຄົນ ທີ່ ບໍ່ ຮູ້ ຈັກ ຄວາມ ປະສົງ
ຂອງ*ເຈົ້ານາຍຕົນ,* ແລະ ໄດ້ເຮັດສິ່ງທີ່ສົມ
ກັບການຖືກຂ້ຽນຕີ, ຈະຖືກຂ້ຽນຕີໜ້ອຍ
ໜຶ່ງ. ເພາະຜູ້ໃດກໍຕາມທີ່*ພຣະຜູ້ເປັນ*
*ເຈົ້າ*ໄດ້ປະທານໃຫ້ຫລາຍ, *ຄົນທັງຫລາຍກໍ*
ຈະຮຽກຮ້ອງຈາກຜູ້ນັ້ນຫລາຍ.

**ປຈສ, ລູກາ 14:35–37.** ປຽບທຽບໃສ່
ກັບ ລູກາ 14:34

ຜູ້ທີ່ຮູ້ຈັກໂມເຊ ແລະ ສາດສະດາ ເຊື່ອໃນພຣະເຢຊູ.

35 *ແລ້ວ ມີຜູ້ຄົນກຸ່ມໜຶ່ງໄດ້ມາຫາພຣະ*
*ອົງ, ຖາມວ່າ, ອາຈານທີ່ດີເອີຍ, ພວກເຮົາມີ*
*ໂມເຊ ແລະ ສາດສະດາ, ແລະ ຜູ້ໃດກໍຕາມ*
*ທີ່ດຳລົງຊີວິດຕາມພວກເພິ່ນ, ແລ້ວຜູ້ນັ້ນ*
*ຈະບໍ່ມີຊີວິດບໍ?*

36 *ແລະ ພຣະເຢຊູໄດ້ຕອບວ່າ, ພວກ*
*ເຈົ້າບໍ່ຮູ້ຈັກໂມເຊ, ທັງບໍ່ຮູ້ຈັກສາດສະດາ;*
*ເພາະຖ້າຫາກພວກເຈົ້າຮູ້ຈັກພວກເພິ່ນ,*
*ພວກເຈົ້າຈະເຊື່ອເລື່ອງເຮົາ; ເພາະການ*
*ຂຽນຂອງພວກເພິ່ນແມ່ນເພື່ອຈຸດປະສົງນີ້.*
*ເພາະເຮົາໄດ້ຖືກສົ່ງມາ ເພື່ອພວກເຈົ້າຈະ*
*ໄດ້ມີຊີວິດ. ສະນັ້ນ ເຮົາຈະປຽບທຽບມັນໃສ່*
*ກັບເກືອ ຊຶ່ງ*ເປັນສິ່ງທີ່ດີ;

37 ແຕ່ຖ້າເກືອ*ໝົດລົດເຄັມຂອງມັນແລ້ວ,*
ກໍບໍ່ມີທາງທີ່ຈະເຮັດໃຫ້ກັບເຄັມໄດ້ອີກ.

**ປຈສ, ລູກາ 16:16–23.** ປຽບທຽບໃສ່
ກັບ ລູກາ 16:16–18

ກົດ ແລະ ສາດສະດາເປັນພະຍານເຖິງພຣະເຢຊູ.
ພວກຟາຣີຊາຍພະຍາຍາມທຳລາຍອານາຈັກ. ພຣະ
ເຢຊູເລົ່າຄຳອຸປະມາເລື່ອງເສດຖີກັບລາຊາໂຣ.

16 *ແລະ ພວກເຂົາໄດ້ກ່າວກັບພຣະອົງ*
*ວ່າ ພວກເຮົາມີກົດ ແລະ ມີສາດສະດາ; ແຕ່*
*ສຳລັບຊາຍຄົນນີ້ ພວກເຮົາຈະບໍ່ຮັບລາວ*
*ເປັນຜູ້ປົກຄອງຂອງພວກເຮົາ; ເພາະລາວ*
*ຕັ້ງຕົວເອງເປັນຜູ້ຕັດສິນພວກເຮົາ.*

17 *ແລ້ວພຣະເຢຊູໄດ້ກ່າວກັບພວກເຂົາ*
*ວ່າ,* ກົດ ແລະ ສາດສະດາ*ເປັນພະຍານ*
*ເຖິງເຮົາ; ແທ້ຈິງແລ້ວ, ແລະ ແມ່ນສາດສະ*
*ດາທັງຫລາຍຜູ້ໄດ້ຂຽນໄວ້, ແມ່ນແຕ່ຈົນ*
ເຖິງໂຢຮັນ, *ໄດ້ບອກລ່ວງໜ້າເຖິງວັນເວລາ*
*ເຫລົ່ານີ້.*

18 ນັບແຕ່ເວລານັ້ນມາ, ມີການສັ່ງສອນ
ກ່ຽວກັບອານາຈັກຂອງພຣະເຈົ້າ, ແລະ ທຸກ
ຄົນ*ທີ່ສະແຫວງຫາຄວາມຈິງ* ຈະຍາດກັນ
ເຂົ້າໄປໃນນັ້ນ.

19 ແລະ ການທີ່ສະຫວັນ ແລະ ແຜ່ນດິນ
ໂລກຈະລ່ວງໄປ ກໍງ່າຍກວ່າທີ່ກົດພຽງແຕ່
ຈຸດດຽວ ຈະຖືກຍົກເລີກ.

20 *ແລະ ດ້ວຍເຫດໃດພວກເຈົ້າຈຶ່ງສອນ
ກົດ, ແລະ ປະຕິເສດສິ່ງທີ່ມີຂຽນໄວ້; ແລະ
ກ່າວໂທດຜູ້ທີ່ພຣະບິດາໄດ້ສົ່ງມາ ເພື່ອ
ເຮັດໃຫ້ກົດສຳເລັດຄົບຖ້ວນ, ເພື່ອພວກ
ເຈົ້າທຸກຄົນອາດໄດ້ຮັບການໄຖ່?*
21 *ໂອ້ ຄົນ ໂງ່ເອີຍ! ພວກເຈົ້າໄດ້ກ່າວ
ຢູ່ໃນໃຈວ່າ ບໍ່ມີພຣະເຈົ້າ. ແລະ ພວກເຈົ້າ
ບິດເບືອນທາງທີ່ຖືກຕ້ອງ; ແລະ ອານາຈັກ
ສະຫວັນຕ້ອງທົນກັບຄວາມຮຸນແຮງຂອງ
ພວກເຈົ້າ; ແລະ ພວກເຈົ້າຂົ່ມເຫັງຄົນທີ່
ອ່ອນໂຍນ; ແລະ ໃນຄວາມຮຸນແຮງຂອງ
ພວກເຈົ້າ ພວກເຈົ້າພະຍາຍາມທຳລາຍ
ອານາຈັກ; ແລະ ພວກເຈົ້າພາລູກໆຂອງ
ອານາຈັກໄປໂດຍການໃຊ້ກຳລັງ. ວິບັດ
ແກ່ພວກເຈົ້າທັງຫລາຍ, ພວກເຈົ້າເຮັດຜິດ
ຖານຫລິ້ນຊູ້!*
22 *ແລະ ພວກເຂົາໄດ້ໝິ່ນປະໝາດພຣະ
ອົງອີກ, ໂດຍທີ່ໃຈຮ້າຍເພາະຄຳກ່າວ, ທີ່
ວ່າພວກເຂົາເປັນຄົນຫລິ້ນຊູ້.*
23 *ແຕ່ພຣະອົງໄດ້ກ່າວຕໍ່ໄປວ່າ,* ຜູ້ໃດກໍ
ຕາມທີ່ຢ່າຮ້າງເມຍຂອງຕົນ, ແລະ ໄປແຕ່ງ
ງານກັບຍິງອື່ນ ກໍຜິດໃນຖານຫລິ້ນຊູ້; ແລະ
ຜູ້ໃດກໍຕາມທີ່ແຕ່ງງານກັບຍິງແມ່ຮ້າງ, ກໍ
ຜິດໃນຖານຫລິ້ນຊູ້. *ແທ້ຈິງແລ້ວ ເຮົາກ່າວ
ກັບພວກເຈົ້າວ່າ ເຮົາຈະປຽບທຽບພວກ
ເຈົ້າໃສ່ກັບເສດຖີຄົນໜຶ່ງ.*

**ປຈສ, ລູກາ 17:21.** ປຽບທຽບໃສ່ກັບ
ລູກາ 17:20–21

ອານາຈັກຂອງພຣະເຈົ້າມາເຖິງແລ້ວ.

21 ບໍ່ມີຜູ້ໃດຈະເວົ້າວ່າ, ເບິ່ງແມ, ຢູ່ທີ່ນີ້!
ຫລື ເບິ່ງແມ, ຢູ່ທີ່ນັ້ນ! ເພາະ, ຈົ່ງເບິ່ງ, ອາ
ນາຈັກຂອງພຣະເຈົ້າຢູ່*ໃນທ່າມກາງພວກ
ເຈົ້າແລ້ວ.*

**ປຈສ, ລູກາ 17:36–40.** ປຽບທຽບໃສ່
ກັບ ລູກາ 17:37

ພຣະເຢຊູເລົ່າຄຳອຸປະມາເລື່ອງຝູງແຮ້ງ ເພື່ອອະທິ
ບາຍເຖິງການເຕົ້າໂຮມໄພ່ພົນຂອງພຣະອົງ ໃນຍຸກ
ສຸດທ້າຍ.

36 ແລະ ເຂົາເຈົ້າໄດ້ຕອບ ແລະ ກ່າວກັບ
ພຣະອົງວ່າ, ພຣະອົງເຈົ້າເອີຍ, *ເຫດການ
ນັ້ນຈະເກີດຂຶ້ນຢູ່ທີ່ໃດ?*
37 ແລະ ພຣະອົງໄດ້ກ່າວກັບເຂົາເຈົ້າວ່າ
ຊາກສົບຢູ່*ບ່ອນໃດ; ຫລື ອີກຄຳໜຶ່ງ,* ໄພ່
*ພົນຂອງພຣະເຈົ້າເຕົ້າໂຮມຢູ່ບ່ອນໃດ,* ຝູງ
ແຮ້ງກໍຈະຈຸ້ມກັນຢູ່ບ່ອນນັ້ນ; *ຫລື ຢູ່ທີ່ນັ້ນ ຜູ້
ທີ່ເຫລືອຢູ່ຈະຖືກພາມາເຕົ້າໂຮມກັນ.*
38 *ເລື່ອງນີ້ພຣະອົງໄດ້ກ່າວ, ໂດຍໝາຍ
ເຖິງການເຕົ້າໂຮມຂອງໄພ່ພົນຂອງພຣະ
ອົງ; ແລະ ເຫລົ່າທູດໄດ້ລົງມາ ແລະ ເຕົ້າ
ໂຮມຜູ້ທີ່ເຫລືອຢູ່ໄວ້ກັບພວກເຂົາ; ຄົນໜຶ່ງ
ຈາກຕຽງນອນ, ອີກຄົນໜຶ່ງຈາກບ່ອນໂມ້
ແປ້ງ, ແລະ ຄົນໜຶ່ງອີກຈາກທົ່ງ, ບ່ອນໃດກໍ
ຕາມທີ່ພຣະອົງປະສົງ.*
39 *ເພາະຕາມຈິງແລ້ວ ຈະມີຟ້າສະຫວັນ
ໃໝ່, ແລະ ແຜ່ນດິນໂລກໃໝ່, ຊຶ່ງໃນນັ້ນ
ຄວາມຊອບທຳຈະດຳລົງຢູ່.*
40 *ແລະ ຈະບໍ່ມີສິ່ງທີ່ບໍ່ສະອາດ; ເພາະ
ແຜ່ນດິນໂລກຈະເລີ່ມເກົ່າລົງ, ແມ່ນແຕ່
ເປັນເໝືອນເສື້ອຜ້າ, ເລີ່ມເປົ່າເປື່ອຍລົງ
ເລື້ອຍໆ, ດັ່ງນັ້ນ ມັນຈຶ່ງສູນຫາຍໄປ, ແລະ
ທີ່ຮອງພຣະບາດຍັງຢູ່ໃນສະພາບທີ່ໄດ້ຮັບ
ການຊຳລະໃຫ້ບໍລິສຸດແລ້ວ, ຖືກຊຳລະ
ລ້າງຈາກບາບທັງໝົດ.*

**ປຈສ, ລູກາ 18:27.** ປຽບທຽບໃສ່ກັບ
ລູກາ 18:27

ການໄວ້ວາງໃຈໃນຄວາມຮັ່ງມີ ກີດກັນບຸກຄົນຈາກ
ການເຂົ້າໄປໃນອານາຈັກຂອງພຣະເຈົ້າ.

27 ແລະ ພຣະອົງໄດ້ກ່າວ*ກັບເຂົາເຈົ້າ*

*ວ່າ, ເປັນໄປບໍ່ໄດ້ສຳລັບຄົນທີ່ໄວ້ວາງໃຈໃນຄວາມຮັ່ງມີ, ທີ່ຈະເຂົ້າໄປໃນອານາຈັກຂອງພຣະເຈົ້າ; ແຕ່ຄົນທີ່ປະຖິ້ມສິ່ງທີ່ເປັນຂອງໂລກນີ້, ຄົງເປັນໄປໄດ້ນຳພຣະເຈົ້າ, ທີ່ເຂົາຈະເຂົ້າໄປ.*

**ປຈສ, ລູກາ 21:24–26.** ປຽບທຽບໃສ່ກັບ ລູກາ 21:25–26

ພຣະເຢຊູກ່າວເຖິງເຄື່ອງໝາຍບາງຢ່າງຂອງການສະເດັດມາຂອງພຣະອົງ.

24 *ບັດນີ້ ພຣະອົງໄດ້ກ່າວສິ່ງເຫລົ່ານີ້ກັບເຂົາເຈົ້າ, ກ່ຽວກັບຄວາມພິນາດຂອງເຢຣູຊາເລັມ. ແລະ ຈາກນັ້ນສານຸສິດຂອງພຣະອົງໄດ້ຖາມພຣະອົງ, ກ່າວວ່າ ອາຈານເອີຍ, ຂໍຈົ່ງບອກພວກຂ້ານ້ອຍກ່ຽວກັບການສະເດັດມາຂອງພຣະອົງ?*

25 *ແລະ ພຣະອົງໄດ້ຕອບເຂົາເຈົ້າ, ແລະ ກ່າວວ່າ ໃນເວລາຂອງລຸ້ນຄົນຕ່າງຊາດຈະສິ້ນສຸດ,* ຈະມີເຄື່ອງໝາຍຢູ່ໃນດວງຕາເວັນ, ແລະ ໃນດວງເດືອນ, ແລະ ໃນດວງດາວ; ແລະ ຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆ ຊຶ່ງມີຄວາມສະຫງົນສົນເທ, *ດັ່ງສຽງກ້ອງຂອງທະເລ* ແລະ ຟອງຄື້ນ. *ແຜ່ນດິນໂລກຈະວຸ້ນວາຍຄືກັນ, ແລະ ຜືນນ້ຳທີ່ເລິກທີ່ສຸດ;*

26 ໃຈຂອງມະນຸດທໍ້ຖອຍເພາະຄວາມຢ້ານກົວ, ແລະ ເພາະຫລຽວຫາສິ່ງເຫລົ່ານັ້ນທີ່ຈະມາສູ່ແຜ່ນດິນໂລກ. ເພາະອຳນາດໃນຟ້າສະຫວັນຈະສັ່ນສະທ້ານຫວັ່ນໄຫວ.

**ປຈສ, ລູກາ 21:32.** ປຽບທຽບໃສ່ກັບ ລູກາ 21:32

ທຸກສິ່ງທັງປວງຈະສຳເລັດຄົບຖ້ວນ ເມື່ອເວລາຂອງຄົນຕ່າງຊາດສິ້ນສຸດລົງ.

32 ຕາມຈິງແລ້ວ ເຮົາກ່າວກັບພວກເຈົ້າວ່າ ຄົນລຸ້ນນີ້, *ລຸ້ນທີ່ເມື່ອເວລາຂອງຄົນຕ່າງຊາດສິ້ນສຸດລົງ,* ຈະບໍ່ລ່ວງພົ້ນໄປ ຈົນກວ່າທຸກສິ່ງທັງປວງຈະສຳເລັດຄົບຖ້ວນ.

**ປຈສ, ລູກາ 23:35.** ປຽບທຽບໃສ່ກັບ ລູກາ 23:34

ພຣະເຢຊູຂໍການອະໄພໂທດໃຫ້ແກ່ພວກທະຫານຊາວໂຣມ ຜູ້ຄຶງພຣະອົງ.

35 ແລ້ວ ພຣະເຢຊູໄດ້ກ່າວວ່າ, ພຣະບິດາເຈົ້າເອີຍ, ໂຜດຍົກໂທດໃຫ້ພວກເຂົາດ້ວຍເຖີດ; ເພາະພວກເຂົາບໍ່ຮູ້ຈັກວ່າ ພວກເຂົາກຳລັງເຮັດຫຍັງ *(ໝາຍເຖິງພວກທະຫານຜູ້ໄດ້ຄຶງພຣະອົງ,)* ແລະ ພວກເຂົາໄດ້ແບ່ງປັນເຄື່ອງນຸ່ງຂອງພຣະອົງ ໂດຍໃຊ້ສະຫລາກ.

**ປຈສ, ລູກາ 24:2–4.** ປຽບທຽບໃສ່ກັບ ລູກາ 24:2–5

ພວກແມ່ຍິງເຫັນທູດສອງອົງ ຢູ່ທີ່ອຸບມຸງຂອງພຣະເຢຊູ.

2 ແລະ ພວກນາງໄດ້ເຫັນກ້ອນຫີນໄດ້ຖືກກິ້ງອອກຈາກປາກອຸບມຸງ, *ແລະ ທູດສອງອົງຢືນຢູ່ໃກ້ພວກນາງ ນຸ່ງເຄື່ອງເປັ່ງປະກາຍຈົນເຫລື້ອມຕາ.*

3 ແລະ ພວກນາງໄດ້*ເຂົ້າໄປໃນອຸບມຸງ,* ແລະ *ບໍ່ເຫັນ*ພຣະສົບຂອງອົງພຣະເຢຊູ, ພວກນາງໄດ້ຢືນຄິດເຖິງເຫດການຢູ່;

4 ແລະ ກໍມີຄວາມ*ຢ້ານກົວ,* ແລະ ໄດ້ກົ້ມຂາບລົງພື້ນດິນ. *ແຕ່ຈົ່ງເບິ່ງ ທູດ*ໄດ້ກ່າວກັບພວກນາງວ່າ, ເປັນຫຍັງພວກເຈົ້າຈຶ່ງຊອກຫາຄົນເປັນຢູ່ໃນໝູ່ຄົນຕາຍ?

**ປຈສ, ໂຢຮັນ 1:1–34.** ປຽບທຽບໃສ່ກັບ ໂຢຮັນ 1:1–34

ພຣະກິດຕິຄຸນຂອງພຣະເຢຊູຄຣິດໄດ້ຖືກສັ່ງສອນຕັ້ງແຕ່ຕົ້ນ. ໂຢຮັນບັບຕິສະໂຕແມ່ນອີລາຍ ຜູ້ຕຽມທາງໄວ້ໃຫ້ພຣະຄຣິດ, ແລະ ພຣະເຢຊູຄຣິດແມ່ນອີລາຍ ຜູ້ຟື້ນຟູທຸກສິ່ງທັງປວງ ແລະ ຄວາມລອດມາເຖິງຜ່ານພຣະອົງ.

1 ແຕ່ຕົ້ນເດີມ *ພຣະກິດຕິຄຸນໄດ້ຖືກສັ່ງ*
*ສອນຜ່ານພຣະບຸດ. ແລະ ພຣະກິດຕິຄຸນຄື*
*ພຣະຄຳ,* ແລະ ພຣະຄຳໄດ້ສະຖິດຢູ່ກັບ*ພຣະ*
*ບຸດ, ແລະ ພຣະບຸດໄດ້ຢູ່ກັບພຣະເຈົ້າ,* ແລະ
*ພຣະບຸດ*ມາຈາກພຣະເຈົ້າ.
2 ຕັ້ງແຕ່ຕົ້ນພຣະອົງດຽວກັນນັ້ນໄດ້ຢູ່ນຳ
ພຣະເຈົ້າ.
3 ພຣະອົງໄດ້ສ້າງທຸກສິ່ງທັງປວງ; ແລະ
ບໍ່ມີສິ່ງໃດທີ່ເປັນມາໂດຍປາດສະຈາກພຣະ
ອົງ.
4 *ພຣະກິດຕິຄຸນ*ມີຊີວິດຢູ່ໃນພຣະອົງ,
ແລະ *ພຣະກິດຕິຄຸນເປັນຊີວິດ,* ແລະ ຊີວິດ
ເປັນຄວາມສະຫວ່າງຂອງມະນຸດ;
5 ແລະ ຄວາມສະຫວ່າງສ່ອງ*ເຂົ້າມາໃນ*
*ໂລກ,* ແລະ *ໂລກເອົາຊະນະ*ມັນບໍ່ໄດ້ຈັກ
ເທື່ອ.
6 ຊາຍຜູ້ໜຶ່ງໄດ້ຖືກພຣະເຈົ້າສົ່ງມາ, ຜູ້ມີ
ຊື່ວ່າ ໂຢຮັນ.
7 ຄົນດຽວກັນນັ້ນ*ໄດ້ມາສູ່ໂລກ*ເພື່ອເປັນ
ພະຍານ, ເພື່ອເປັນພະຍານເຖິງ*ຄວາມສະ*
*ຫວ່າງ, ເພື່ອເປັນພະຍານເຖິງພຣະກິດຕິຄຸນ*
*ຂອງພຣະບຸດ, ແກ່ຄົນທັງປວງ,* ເພື່ອວ່າຜ່ານ
ເພິ່ນ *ມະນຸດ*ອາດຈະເຊື່ອ.
8 ເພິ່ນ ບໍ່ ແມ່ນ*ຄວາມ ສະ ຫວ່າງ*ນັ້ນ,
ແຕ່*ໄດ້ມາ*ເພື່ອເປັນພະຍານເຖິງ*ຄວາມສະ*
*ຫວ່າງ*ນັ້ນ,
9 ຊຶ່ງເປັນ*ຄວາມສະຫວ່າງ*ທີ່ແທ້ຈິງ, ຊຶ່ງ
ສ່ອງໃສ່ມະນຸດທຸກຄົນ ຜູ້ໄດ້ເຂົ້າມາສູ່ໂລກ;
10 *ແມ່ນແຕ່ພຣະບຸດຂອງພຣະເຈົ້າ.*
ພຣະອົງຜູ້ເຄີຍຢູ່ໃນໂລກມາແລ້ວ, ແລະ
ໂລກໄດ້ຖືກສ້າງຂຶ້ນໂດຍພຣະອົງ, ແລະ
ໂລກບໍ່ຮູ້ຈັກພຣະອົງເລີຍ.
11 ພຣະອົງໄດ້ສະເດັດມາຫາຄົນຂອງ
ພຣະອົງເອງ, ແລະ ຄົນຂອງພຣະອົງເອງບໍ່
ໄດ້ຕ້ອນຮັບພຣະອົງເລີຍ.
12 ແຕ່ຫລາຍຕໍ່ຫລາຍຄົນທີ່ຕ້ອນຮັບ
ພຣະອົງ, ພຣະອົງກໍປະທານຄວາມສາ
ມາດໃຫ້ກາຍເປັນບຸດຂອງພຣະເຈົ້າ; *ພຽງ*
*ແຕ່*ແກ່ພວກເຂົາທີ່ເຊື່ອໃນພຣະນາມຂອງ
ພຣະອົງ.
13 *ພຣະອົງໄດ້*ກຳເນີດມາ, ບໍ່ແມ່ນໂດຍ
ອາໄສໂລຫິດ, ຫລື ຕາມຄວາມປະສົງຂອງ
ເນື້ອໜັງ, ຫລື ຕາມຄວາມປະສົງຂອງ
ມະນຸດ, ແຕ່ຈາກພຣະເຈົ້າ.
14 ແລະ *ພຣະທຳດຽວກັນ*ນັ້ນໄດ້ມາເກີດ
ເປັນມະນຸດ, ແລະ ໄດ້ອາໄສຢູ່ໃນທ່າມກາງ
ເຮົາທັງຫລາຍ, ແລະ ພວກເຮົາໄດ້ເຫັນລັດ
ສະໝີພາບຂອງພຣະອົງ, ລັດສະໝີພາບ
ຂອງພຣະອົງດຽວທີ່ຖືກຳເນີດຈາກພຣະ
ບິດາ, ເຕັມໄປດ້ວຍພຣະຄຸນ ແລະ ຄວາມ
ຈິງ.
15 ໂຢຮັນ*ເປັນ*ພະຍານ ເຖິງ ພຣະ ອົງ,
ແລະ ໄດ້ຮ້ອງປະກາດວ່າ ຜູ້ນີ້*ແຫລະ* ຄືຜູ້
ທີ່ເຮົາໄດ້ກ່າວເຖິງ; ຜູ້ທີ່ມາພາຍຫລັງເຮົາ,
ກໍຍິ່ງໃຫຍ່ກວ່າເຮົາ; ເພາະພຣະອົງຢູ່ກ່ອນ
ເຮົາແລ້ວ.
16 *ເພາະ ຕັ້ງ ແຕ່ ຕົ້ນ ພຣະ ທຳ ເປັນ ຢູ່*
*ແລ້ວ, ແມ່ນແຕ່ພຣະບຸດ, ຜູ້ໄດ້ມາເກີດ*
*ເປັນມະນຸດ, ແລະ ໄດ້ຖືກສົ່ງມາໃຫ້ພວກ*
*ເຮົາ ໂດຍພຣະປະສົງຂອງພຣະບິດາ. ແລະ*
*ຕາບໃດທີ່ຫລາຍຕໍ່ຫລາຍຄົນເຊື່ອໃນພຣະ*
*ນາມຂອງພຣະອົງ ຈະໄດ້ຮັບຈາກຄວາມ*
*ສົມບູນຂອງພຣະອົງ.* ແລະ ຈາກຄວາມສົມ
ບູນຂອງພຣະອົງ ເຮົາທັງປວງໄດ້ຮັບ, *ແມ່ນ*
*ແຕ່ຄວາມເປັນອະມະຕະ ແລະ ຊີວິດນິລັນ*
*ດອນ, ຜ່ານພຣະຄຸນຂອງພຣະອົງ.*
17 ເພາະກົດໄດ້ຖືກມອບໃຫ້*ຜ່ານ*ໂມເຊ,
ແຕ່*ຊີວິດ* ແລະ ຄວາມຈິງມາເຖິງ *ຜ່ານ*ພຣະ
ເຢຊູຄຣິດ.
18 *ເພາະກົດເປັນໄປຕາມພຣະບັນຍັດ*
*ຝ່າຍໂລກ, ສົ່ງຜົນໃຫ້ເກີດຄວາມຕາຍ; ແຕ່*
*ພຣະກິດຕິຄຸນເປັນໄປຕາມພະລັງຂອງຊີ*

*ວິດທີ່ເປັນນິດ, ຜ່ານພຣະເຢຊູຄຣິດ, ພຣະບຸດອົງດຽວທີ່ຖືກຳເນີດ, ຜູ້ຢູ່ໃນຊວງອົກຂອງພຣະບິດາ.*

19 *ແລະ* ບໍ່ເຄີຍມີມະນຸດຄົນໃດເຄີຍເຫັນພຣະເຈົ້າ ບໍ່ວ່າຈະເປັນເວລາໃດ, *ຍົກເວັ້ນແຕ່ຕອນທີ່ພຣະອົງເປັນພະຍານເຖິງພຣະບຸດ; ເພາະເວັ້ນແຕ່ໂດຍຜ່ານພຣະອົງ ບໍ່ມີມະນຸດຄົນໃດຈະລອດໄດ້.*

20 ແລະ ນີ້ຄືບັນທຶກຂອງໂຢຮັນ, ເມື່ອຊາວຢິວໄດ້ສົ່ງພວກປະໂລຫິດ ແລະ ຊາວເລວີ ມາຈາກເຢຣູຊາເລັມ ໄປຖາມລາວວ່າ ລາວຄືໃຜ?

21 ແລະ ລາວໄດ້ຍອມຮັບ, ແລະ ບໍ່ໄດ້ປະຕິເສດ *ວ່າ ລາວຄືອີລາຍ;* ແຕ່ໄດ້ປະຕິເສດ, *ກ່າວວ່າ;* ຂ້າພະເຈົ້າບໍ່ແມ່ນພຣະຄຣິດ.

22 ແລະ ພວກເຂົາໄດ້ຖາມລາວ*ວ່າ ທ່ານເປັນ ອີລາຍ*ໄດ້ແນວໃດ? ແລະ ລາວໄດ້ກ່າວວ່າ ຂ້າພະເຈົ້າບໍ່ໄດ້ເປັນ*ອີລາຍຄົນນັ້ນທີ່ຈະມາຟື້ນຟູທຸກສິ່ງທັງປວງ. ແລະ ພວກເຂົາໄດ້ຖາມລາວວ່າ* ທ່ານຄືສາດສະດາຄົນນັ້ນບໍ? ແລະ ລາວໄດ້ຕອບວ່າ ບໍ່ແມ່ນ.

23 ຈາກນັ້ນ ພວກເຂົາໄດ້ກ່າວກັບລາວວ່າ ທ່ານຄືຜູ້ໃດ? ເພື່ອວ່າພວກເຮົາຈະໄດ້ໃຫ້ຄຳຕອບແກ່ຄົນທີ່ສົ່ງພວກເຮົາມາ. ທ່ານຈະກ່າວແນວໃດກ່ຽວກັບຕົວທ່ານເອງ?

24 ລາວໄດ້ກ່າວວ່າ ຂ້າພະເຈົ້າຄືສຽງຂອງຄົນທີ່ຮ້ອງປະກາດ ຢູ່ໃນຖິ່ນແຫ້ງແລ້ງກັນດານ, ຈົ່ງແປງທາງຂອງພຣະຜູ້ເປັນເຈົ້າໃຫ້ຊື່ຕົງ, ດັ່ງທີ່ສາດສະດາເອຊາອັດໄດ້ກ່າວໄວ້.

25 ແລະ ພວກເຂົາເປັນຜູ້ທີ່ຖືກພວກຟາຣີຊາຍສົ່ງມາ.

26 ແລະ ພວກເຂົາໄດ້ຖາມລາວ, ແລະ ກ່າວກັບລາວວ່າ ແລ້ວດ້ວຍເຫດໃດທ່ານຈຶ່ງໃຫ້ບັບຕິສະມາ, ຖ້າຫາກທ່ານບໍ່ໄດ້ເປັນພຣະຄຣິດ, ຫລື ອີລາຍ *ຜູ້ຈະຟື້ນຟູທຸກສິ່ງທັງປວງ,* ຫລື ສາດສະດາຜູ້ນັ້ນ?

27 ໂຢຮັນໄດ້ຕອບພວກເຂົາວ່າ ຂ້າພະເຈົ້າໃຫ້ຮັບບັບຕິສະມາດ້ວຍນ້ຳ, ແຕ່ມີຄົນໜຶ່ງຢູ່ໃນບັນດາພວກທ່ານ ຜູ້ຊຶ່ງພວກທ່ານບໍ່ຮູ້ຈັກ;

28 ພຣະອົງຄືຜູ້*ທີ່ຂ້າພະເຈົ້າກ່າວເປັນພະຍານ. ພຣະອົງຄືສາດສະດາຜູ້ນັ້ນ, ແມ່ນແຕ່ອີລາຍ,* ຜູ້ໄດ້ມາຫລັງຈາກຂ້າພະເຈົ້າ, ຜູ້ທີ່ຍິ່ງໃຫຍ່ກວ່າຂ້າພະເຈົ້າ, ຜູ້ຊຶ່ງແມ່ນແຕ່ສາຍເກີບຂອງເພິ່ນ ຂ້າພະເຈົ້າກໍບໍ່ສົມຄວນຈະແກ້ໃຫ້, ຫລື *ຕຳແໜ່ງທີ່ຂ້າພະເຈົ້າບໍ່ມີວັນຈະເໝາະສົມ ເພາະພຣະອົງຈະໃຫ້ບັບຕິສະມາ, ບໍ່ພຽງແຕ່ດ້ວຍນ້ຳເທົ່ານັ້ນ, ແຕ່ດ້ວຍໄຟ, ແລະ ດ້ວຍພຣະວິນຍານບໍລິສຸດນຳອີກ.*

29 ມື້ຕໍ່ມາ ໂຢຮັນໄດ້ເຫັນພຣະເຢຊູມາຫາລາວ, ແລະ ກ່າວວ່າ ຈົ່ງເບິ່ງພຣະເມສານ້ອຍຂອງພຣະເຈົ້າ, ຜູ້ໄດ້ຮັບເອົາບາບກຳຂອງໂລກໄປ!

30 *ແລະ ໂຢຮັນ ໄດ້ ເປັນ ພະຍານ ເຖິງພຣະອົງແກ່ຜູ້ຄົນ ໂດຍກ່າວວ່າ ນີ້ຄືພຣະອົງຜູ້ທີ່ຂ້າພະເຈົ້າໄດ້ກ່າວໄວ້;* ຊາຍຄົນໜຶ່ງທີ່ຍິ່ງໃຫຍ່ກວ່າຂ້າພະເຈົ້າ ຈະມາຫລັງຈາກຂ້າພະເຈົ້າ; ເພາະພຣະອົງໄດ້ເປັນຢູ່ກ່ອນຂ້າພະເຈົ້າ, ແລະ ຂ້າພະເຈົ້າຮູ້ຈັກພຣະອົງ, *ແລະ* ວ່າພຣະອົງຈະຖືກສະແດງໃຫ້ປະຈັກແກ່ຊາວອິດສະຣາເອນ; ສະນັ້ນ ຂ້າພະເຈົ້າຈຶ່ງມາໃຫ້ບັບຕິສະມາດ້ວຍນ້ຳ.

31 ແລະ ໂຢຮັນໄດ້ກ່າວເປັນພະຍານບອກວ່າ *ເມື່ອພຣະອົງໄດ້ຮັບບັບຕິສະມາຈາກຂ້າພະເຈົ້າ,* ຂ້າພະເຈົ້າໄດ້ເຫັນພຣະວິນຍານສະເດັດລົງມາຈາກສະຫວັນດັ່ງນົກເຂົາ, ແລະ ມາສະຖິດຢູ່ເທິງພຣະອົງ.

32 ແລະ ຂ້າພະເຈົ້າຮູ້ຈັກພຣະອົງ; *ເພາະ*
ພຣະອົງໄດ້ສົ່ງຂ້າພະເຈົ້າມາໃຫ້ບັບຕິ

ສະມາດ້ວຍນ້ຳ, ພຣະອົງດຽວກັນນັ້ນໄດ້ກ່າວກັບຂ້າພະເຈົ້າວ່າ ຢູ່ເທິງຜູ້ນັ້ນ ເຈົ້າຈະເຫັນພຣະວິນຍານສະເດັດລົງມາ, ແລະ ສະຖິດຢູ່ເທິງເພິ່ນ, ແລະ ຄົນນັ້ນຄືຜູ້ທີ່ໃຫ້ບັບຕິສະມາດ້ວຍພຣະວິນຍານບໍລິສຸດ.

33 ແລະ ຂ້າພະເຈົ້າໄດ້ເຫັນ, ແລະ ເປັນພະຍານວ່າ ນີ້ແມ່ນພຣະບຸດຂອງພຣະເຈົ້າ.

34 *ສິ່ງເຫລົ່ານີ້ ໄດ້ຖືກກະທຳໄປໃນເບັດທາບາຣາ, ເລີຍຈາກແມ່ນ້ຳຈໍແດນໄປ, ບ່ອນທີ່ໂຢຮັນໃຫ້ບັບຕິສະມາ.*

**ປຈສ, ໂຢຮັນ 1:42.** ປຽບທຽບໃສ່ກັບ ໂຢຮັນ 1:42

ເກຟາ ໝາຍເຖິງ "ຜູ້ພະຍາກອນ" ຫລື "ຫີນ."

42 ແລະ ລາວໄດ້ພາຊາຍຄົນໜຶ່ງໄປຫາພຣະເຢຊູ. ແລະ ເມື່ອພຣະເຢຊູເບິ່ງລາວແລ້ວ, ພຣະອົງໄດ້ກ່າວວ່າ ເຈົ້າຊື່ຊີໂມນ, ລູກຂອງໂຢນາ, ແຕ່ເຈົ້າຈະຖືກເອີ້ນວ່າເກຟາ, ຊຶ່ງແປວ່າ *ຜູ້ພະຍາກອນ, ຫລື* ຫີນ. *ແລະ ພວກເຂົາເປັນຄົນຫາປາ. ແລະ ພວກເຂົາໄດ້ປະທຸກສິ່ງທັນທີ, ແລະ ໄດ້ຕິດຕາມພຣະເຢຊູໄປ.*

**ປຈສ, ໂຢຮັນ 4:1–4.** ປຽບທຽບໃສ່ກັບ ໂຢຮັນ 4:1–2

ພວກຟາຣີຊາຍພະຍາຍາມຂ້າພຣະເຢຊູ. ພຣະອົງໃຫ້ບັບຕິສະມາຈຳນວນໜຶ່ງ, ແຕ່ສານຸສິດຂອງພຣະອົງໃຫ້ບັບຕິສະມາຫລາຍກວ່າ.

1 ສະນັ້ນ ເມື່ອພວກຟາຣີຊາຍໄດ້ຍິນວ່າພຣະເຢຊູໄດ້ໃຫ້ບັບຕິສະມາຫລາຍກວ່າໂຢຮັນ,

2 *ພວກເຂົາກໍຍິ່ງພະຍາຍາມຫລາຍຂຶ້ນດ້ວຍການຊອກຫາວິທີທີ່ຈະຂ້າພຣະອົງເສຍ; ເພາະຫລາຍຄົນໄດ້ຍອມຮັບ ໂຢຮັນວ່າເປັນສາດສະດາ, ແຕ່ພວກເຂົາບໍ່ເຊື່ອໃນພຣະເຢຊູເລີຍ.*

3 *ບັດນີ້ ພຣະຜູ້ເປັນເຈົ້າຮູ້ເຖິງເລື່ອງນີ້,* ເຖິງແມ່ນວ່າ*ຕົວ*ພຣະອົງເອງບໍ່ເຄີຍໄດ້ໃຫ້ບັບຕິສະມາ*ຫລາຍ*ເທົ່າກັບສານຸສິດຂອງພຣະອົງ;

4 *ເພາະພຣະອົງຍອມໃຫ້ເຂົາເຈົ້າເຮັດເຊັ່ນນີ້ ເພື່ອເປັນແບບຢ່າງ, ເພື່ອເປັນກຽດແກ່ກັນແລະກັນ.*

**ປຈສ, ໂຢຮັນ 4:26.** ປຽບທຽບໃສ່ກັບ ໂຢຮັນ 4:24

ພຣະເຈົ້າສັນຍາວ່າຈະມອບພຣະວິນຍານຂອງພຣະອົງໃຫ້ຜູ້ທີ່ເຊື່ອຢ່າງແທ້ຈິງ.

26 *ເພາະ ແກ່ຄົນເຊັ່ນນັ້ນ* ພຣະເຈົ້າໄດ້*ສັນຍາ*ວ່າຈະມອບພຣະວິນຍານ*ຂອງພຣະອົງ*ໃຫ້. ແລະ ພວກເຂົາຜູ້ທີ່ນະມັດສະການພຣະອົງ, ຈະຕ້ອງນະມັດສະການດ້ວຍວິນຍານ ແລະ ດ້ວຍຄວາມຈິງ.

**ປຈສ, ໂຢຮັນ 6:44.** ປຽບທຽບໃສ່ກັບ ໂຢຮັນ 6:44

ພຣະປະສົງຂອງພຣະບິດາຄື ຢາກໃຫ້ທຸກຄົນຮັບເອົາພຣະເຢຊູ. ຜູ້ທີ່ເຮັດຕາມພຣະປະສົງຂອງພຣະເຢຊູ ຈະຖືກຍົກຂຶ້ນໃນການຟື້ນຄືນຊີວິດຂອງຄົນທີ່ທ່ຽງທຳ.

44 ບໍ່ມີຜູ້ໃດມາຫາເຮົາໄດ້, ນອກຈາກ*ເຂົາຈະເຮັດຕາມພຣະປະສົງຂອງ*ພຣະບິດາ*ຂອງ*ເຮົາ ຜູ້ໄດ້ສົ່ງເຮົາມາ. *ແລະ ນີ້ຄືພຣະປະສົງຂອງພຣະອົງ ຜູ້ທີ່ໄດ້ສົ່ງເຮົາມາ, ວ່າພວກເຈົ້າຈະຮັບເອົາພຣະບຸດ; ເພາະພຣະບິດາໄດ້ບອກໄວ້ເຖິງພຣະອົງ; ແລະ ຜູ້ທີ່ຮັບເອົາປະຈັກພະຍານ, ແລະ ເຮັດຕາມພຣະປະສົງຂອງພຣະອົງ ຜູ້ທີ່ໄດ້ສົ່ງເຮົາມາ,* ເຮົາຈະຍົກເຂົາຂຶ້ນ*ໃນການຟື້ນຄືນຊີວິດຂອງຄົນທີ່ທ່ຽງທຳ.*

**ປຈສ, ໂຢຮັນ 13:8–10.** ປຽບທຽບໃສ່ກັບ ໂຢຮັນ 13:8–10

ພຣະເຢຊູລ້າງຕີນຂອງອັກຄະສາວົກ ເພື່ອເຮັດໃຫ້ກົດຂອງຊາວຢິວສຳເລັດຄົບຖ້ວນ.

8 ເປໂຕ ໄດ້ກ່າວ ກັບພຣະ ອົງວ່າ ພຣະອົງ*ບໍ່ຈຳເປັນຕ້ອງ*ລ້າງຕີນ ຂ້ານ້ອຍດອກ. ພຣະເຢຊູໄດ້ຕອບລາວວ່າ, ຖ້າເຮົາບໍ່ລ້າງຕີນເຈົ້າ, ເຈົ້າກໍບໍ່ໄດ້ມີສ່ວນໃນເຮົາ.

9 ຊີໂມນເປໂຕໄດ້ກ່າວກັບພຣະອົງວ່າ, ພຣະອົງເຈົ້າເອີຍ, ບໍແມ່ນແຕ່ຕີນເທົ່ານັ້ນ, ແຕ່ຈົ່ງລ້າງມື ແລະ ຫົວຂອງຂ້ານ້ອຍນຳດ້ວຍ.

10 ພຣະ ເຢຊູ ໄດ້ ກ່າວ ກັບ ລາວ ວ່າ ຜູ້ທີ່ *ໄດ້ລ້າງມື ແລະ ຫົວ ຂ ອງ ຕີນ*ແລ້ວ ກໍສະອາດທັງໝົດ ມີແຕ່ຈຳ ເປັນ ຕ້ອງ ລ້າງແຕ່ຕີນເທົ່ານັ້ນ; ແລະ ພວກເຈົ້າກໍເປັນຄົນສະອາດແລ້ວ, ແຕ່ບໍ່ແມ່ນໝົດທຸກຄົນ. *ບັດນີ້ ມັນເປັນປະເພນີຂອງຊາວຢິວ ພາຍໃຕ້ກົດຂອງພວກເຂົາ; ດັ່ງນັ້ນ, ພຣະເຢຊູຈຶ່ງໄດ້ເຮັດສິ່ງນີ້ ເພື່ອເຮັດໃຫ້ກົດສຳເລັດຄົບຖ້ວນ.*

**ປຈສ, ໂຢຮັນ 14:30.** ປຽບທຽບໃສ່ກັບ ໂຢຮັນ 14:30

ເຈົ້າຊາຍແຫ່ງຄວາມມືດ, ຫລື ຊາຕານ, ເປັນຂອງໂລກນີ້.

30 ຈາກນີ້ໄປ ເຮົາຈະບໍ່ເວົ້າຫລາຍກັບພວກ ເຈົ້າ; ເພາະ ເຈົ້າຊາຍ*ແຫ່ງຄວາມມືດ, ຜູ້ຊຶ່ງ*ເປັນຂອງໂລກນີ້ ກຳລັງມາ, *ແຕ່ບໍ່ມີອຳນາດເໜືອ ເຮົາ, ແຕ່ມັນມີອຳນາດເໜືອພວກເຈົ້າ.*

**ປຈສ, ກິດຈະການ 9:7.** ປຽບທຽບໃສ່ກັບ ກິດຈະການ 9:7; 22:9

ຜູ້ຄົນທີ່ຢູ່ກັບໂປໂລໃນຂະນະທີ່ລາວກຳລັງສົນທະນາຢູ່ ເຫັນແສງສະຫວ່າງ, ແຕ່ພວກເຂົາບໍ່ໄດ້ຍິນສຸລະສຽງ ຫລື ເຫັນພຣະຜູ້ເປັນເຈົ້າ.

7 ແລະ *ຄົນທີ່ກຳລັງເດີນທາງໄປກັບລາວໄດ້ເຫັນແສງສະຫວ່າງແທ້ໆ, ແລະ ໄດ້ຢ້ານກົວ; ແຕ່ພວກເຂົາບໍ່ໄດ້ຍິນສຸລະສຽງຂອງຜູ້ທີ່ກ່າວກັບລາວ.*

**ປຈສ, ກິດຈະການ 22:29–30.** ປຽບທຽບໃສ່ກັບ ກິດຈະການ 22:29–30

ນາຍພັນໄດ້ສັ່ງໃຫ້ແກ້ໂສ້ອອກຈາກໂປໂລ.

29 ແລ້ວ ພວກທີ່ກຳລັງຈະ ສອບຖາມເພິ່ນ ກໍຖອຍອອກຈາກເພິ່ນທັນທີ, ແລະນາຍພັນເອງເມື່ອຮູ້ວ່າເພິ່ນເປັນຄົນສັນຊາດໂຣມກໍຢ້ານ, ເພາະຕົນໄດ້ສັ່ງໃຫ້ລ່າມໂສ້ເພິ່ນ, ແລະ *ເພິ່ນໄດ້ສັ່ງໃຫ້ແກ້ໂສ້ອອກຈາກເພິ່ນ.*

30 ຕົກ ວັນ ໜ້າ ມາ, ດັ່ງ ນັ້ນ ຍ້ອນ ເພິ່ນຢາກຮູ້ວ່າພວກຢິວກ່າວຫາເພິ່ນດ້ວຍເຫດອັນໃດແທ້, *ເພິ່ນ*ຈຶ່ງສັ່ງ ໃຫ້ບັນດາຫົວໜ້າປະໂລຫິດ ກັບບັນດາສະມາຊິກຂອງສະພາສູງສຸດມາປະຊຸມກັນ, ແລະ ໄດ້ພາໂປໂລໄປ, ແລະ ໃຫ້ຢືນຢູ່ຕໍ່ໜ້າພວກເຂົາ.

**ປຈສ, ໂຣມ 3:5–8.** ປຽບທຽບໃສ່ກັບ ໂຣມ 3:5–8

ໂປໂລສອນວ່າ ຜູ້ຄົນບໍ່ສາມາດເຮັດຄວາມຊົ່ວ ເພື່ອໃຫ້ຄວາມດີເກີດຂຶ້ນ.

5 ແຕ່ ຖ້າຫາກ ເຮົາ ດຳ ເນີນ ຢູ່ ໃນ*ຄວາມອະທຳຂອງເຮົາ* ແລະ *ເປັນເຫດຊີ້ໃຫ້ເຫັນຄວາມຊອບທຳຂອງພຣະເຈົ້າ, ແລ້ວເຮົາຈະວ່າຢ່າງໃດ,* ຈະວ່າ*ພຣະເຈົ້າລົງໂທດຢ່າງບໍ່ຍຸດຕິທຳຢ່າງນັ້ນບໍ?* (ເຮົາເວົ້າຢ່າງມະນຸດ *ຜູ້ຢຳເກງພຣະເຈົ້າ,)*

6 ບໍ່ແມ່ນຢ່າງນັ້ນດອກ; ຖ້າເປັນເຊັ່ນນັ້ນພຣະເຈົ້າຈະພິພາກສາໂລກໄດ້ຢ່າງໃດ?

7 ແຕ່ຖ້າວ່າຄວາມຕົວະຂອງເຮົາ ເປັນເຫດໃຫ້ເຫັນຄວາມທ່ຽງທຳຂອງພຣະເຈົ້າໄດ້ປະກົດແຈ້ງຄັກ, *(ດັ່ງທີ່ຖືກຮຽກຮ້ອງ*

*ຈາກຊາວຢິວ)* ເປັນທີ່ໃຫ້ເກີດກຽດຕິຍົດແກ່ພຣະອົງ; ເປັນຫຍັງເຮົາຈຶ່ງຖືກລົງໂທດເໝືອນຄົນຜິດບາບຜູ້ໜຶ່ງ? ແລະ *ບໍ່ໄດ້ຮັບ? ເພາະ*ເຮົາ*ໄດ້*ຖືກກ່າວຫາ;

8 ແລະ ບາງຄົນຢືນຢັນວ່າ ເຮົາໄດ້ກ່າວວ່າ, *(ຄວາມຈິບຫາຍຂອງຄົນເຊັ່ນນັ້ນກໍຍຸດຕິທຳແລ້ວ,)* ໃຫ້ເຮົາເຮັດຄວາມຊົ່ວ ເພື່ອຄວາມດີຈະເກີດຂຶ້ນ. *ແຕ່ສິ່ງນີ້ບໍ່ຖືກຕ້ອງ.*

**ປຈສ, ໂຣມ 4:2–5.** ປຽບທຽບໃສ່ກັບ ໂຣມ 4:2–5

ມະນຸດສາມາດລອດໄດ້ພຽງແຕ່ໂດຍພຣະຄຸນຂອງພຣະເຢຊູຄຣິດ, ບໍ່ແມ່ນໂດຍການປະຕິບັດທີ່ກ່ຽວພັນກັບການຮັກສາກົດຂອງໂມເຊ.

2 ເພາະຖ້າຫາກອັບຣາຮາມເປັນຜູ້ຊອບທຳໂດຍກົດແຫ່ງການປະຕິບັດ, ແລ້ວເພິ່ນກໍ*ມີທາງທີ່ອວດອ້າງໄດ້;* ແຕ່ບໍ່ແມ່ນ*ຕໍ່ພຣະພັກຂອງ*ພຣະເຈົ້າ.

3 ເພາະ ພຣະຄຳພີມີຂຽນໄວ້ຢ່າງໃດ? ອັບຣາຮາມໄດ້ເຊື່ອພຣະເຈົ້າ, ແລະ ຍ້ອນຄວາມເຊື່ອນັ້ນ ພຣະເຈົ້າຈຶ່ງຖືວ່າ ເພິ່ນເປັນຄົນຊອບທຳ.

4 ສ່ວນຄົນ*ທີ່ເປັນຜູ້ຊອບທຳ ໂດຍກົດແຫ່ງການປະຕິບັດ,* ກໍບໍ່ຖືວ່າຄ່າຈ້າງທີ່ຕົນໄດ້ຮັບນັ້ນເປັນບຳເໜັດ, ແຕ່ຖືວ່າເປັນຄ່າແຮງງານທີ່ຕົນໄດ້ເຮັດ.

5 ແຕ່ ຄົນ*ທີ່ບໍ່ ໄດ້ ສະແຫວງ ຫາ ຄວາມຊອບທຳໂດຍກົດແຫ່ງການປະຕິບັດ,* ແຕ່ໄດ້ເຊື່ອໃນພຣະອົງ ຜູ້ໂຜດ*ຄົນບາບ*ໃຫ້ເປັນຄົນຊອບທຳ, ສັດທາຂອງຄົນນັ້ນ ກໍຖືໄດ້ວ່າເປັນຄົນຊອບທຳ.

**ປຈສ, ໂຣມ 4:16.** ປຽບທຽບໃສ່ກັບ ໂຣມ 4:16

ທັງສັດທາ ແລະ ວຽກງານ, ຜ່ານພຣະຄຸນ, ແມ່ນຈຳເປັນສຳລັບຄວາມລອດ.

16 ສະນັ້ນ *ເຈົ້າກໍຖືກຕ້ອງ*ດ້ວຍສັດທາ *ແລະ ວຽກງານ, ຜ່ານ*ພຣະຄຸນ, ຈົນເຖິງທີ່ສຸດ ເພື່ອວ່າຄຳສັນຍາ ຈະເປັນທີ່ແນ່ນອນແກ່ຜູ້ສືບເຊື້ອສາຍທັງໝົດ; ແລະ ບໍ່ແມ່ນແກ່*ຜູ້*ທີ່ຖືກົດ*ພວກ*ດຽວເທົ່ານັ້ນ, ແຕ່ແກ່ຜູ້ທີ່ມີສັດທາຢ່າງດຽວກັນກັບອັບຣາຮາມນຳອີກ; ຜູ້ຊຶ່ງເປັນບິດາຂອງພວກເຮົາທັງໝົດ,

**ປຈສ, ໂຣມ 7:5–27.** ປຽບທຽບໃສ່ກັບ ໂຣມ 7:5–25

ພຽງແຕ່ພຣະຄຣິດເທົ່ານັ້ນທີ່ສາມາດປ່ຽນຈິດວິນຍານຂອງມະນຸດໄປໃນທາງດີແບບຖາວອນ.

5 ເພາະເມື່ອພວກເຮົາໄດ້ຢູ່ໃນເນື້ອໜັງ, ຢູ່ໃນການກະຕຸ້ນຂອງບາບ, ຊຶ່ງ*ບໍ່ສອດຄ່ອງ*ກັບກົດ, ໄດ້ເຮັດໃຫ້ອະໄວຍະວະຂອງເຮົາເກີດຜົນທີ່ນຳໄປສູ່ຄວາມຕາຍ.

6 ແຕ່ບັດນີ້ ພວກເຮົາໄດ້ພົ້ນຈາກກົດແລ້ວທີ່ພວກເຮົາຖືກຜູກມັດ, *ໂດຍທີ່ໄດ້ຕາຍຈາກກົດ,* ວ່າພວກເຮົາຄວນຮັບໃຊ້ດ້ວຍວິນຍານໃໝ່, ແລະ ບໍ່ຮັບໃຊ້ຕາມຕົວອັກສອນທີ່ມີຂຽນໄວ້.

7 ແລ້ວພວກເຮົາຈະວ່າຢ່າງໃດ? ກົດຄືບາບຊັ້ນບໍ? ຂໍຢ່າໃຫ້ເປັນເຊັ່ນນັ້ນເລີຍ. ບໍ່ແມ່ນຢ່າງນັ້ນດອກ, ເຮົາຈະບໍ່ຮູ້ຈັກບາບເລີຍ, ຍົກເວັ້ນແຕ່ໂດຍກົດ; ເພາະເຮົາຄົງບໍ່ຮູ້ຈັກຄວາມໂລບ, ຖ້າຫາກກົດບໍ່ໄດ້ກ່າວວ່າຢ່າໂລບ.

8 ແຕ່ຄວາມຜິດບາບ, ໂດຍທີ່ຖືໂອກາດໃຊ້ພຣະບັນຍັດ, ໄດ້ເຮັດໃຫ້ເກີດຄວາມປາດຖະໜາອັນແຮງກ້າຕ່າງໆນາໆໃນຕົວຂອງເຮົາ. ເພາະຖ້າບໍ່ມີກົດ ຄວາມຜິດບາບນັ້ນກໍຕາຍເສຍແລ້ວ.

9 ເພາະຄັ້ງໜຶ່ງ ເຮົາເຄີຍມີຊີວິດຢູ່*ໂດຍບໍ່ມີກົດ,* ແຕ່ເມື່ອພຣະບັນຍັດ*ຂອງພຣະຄຣິດ*ມີມາ, ແລ້ວຄວາມຜິດບາບກໍເກີດຂຶ້ນ, ແລະ ເຮົາກໍຕາຍ.

10 ແລະ *ເມື່ອເຮົາບໍ່ເຊື່ອ*ພຣະບັນຍັດ

*ຂອງພຣະຄຣິດທີ່ມີມາ,* ຊຶ່ງຖືກແຕ່ງຕັ້ງໄວ້
ເພື່ອໃຫ້ຊີວິດ, ເຮົາຈຶ່ງພົບວ່າ *ມັນກ່າວໂທດ
ເຮົາ*ໄປສູ່ຄວາມຕາຍ.
11 ເພາະ ຄວາມ ຜິດ ບາບ, ໂດຍ ຖື ໂອ
ກາດ, ໄດ້*ປະຕິເສດ*ພຣະບັນຍັດ, *ແລະ* ໄດ້
ຫລອກລວງເຮົາ; ແລະ ໂດຍກົດນັ້ນ *ເຮົາ
ໄດ້ຖືກຂ້າ.*
12 *ເຖິງຢ່າງໃດກໍຕາມ, ເຮົາພົບວ່າ* ກົດກໍ
ສັກສິດ, ແລະ ພຣະບັນຍັດ*ກໍ*ສັກສິດ, ແລະ
ຍຸດຕິທຳ, ແລະ ດີງາມ.
13 ແລ້ວ ສິ່ງທີ່ດີນຳຄວາມຕາຍມາສູ່ເຮົາ
ຊັ້ນບໍ? ຂໍຢ່າໃຫ້ເປັນເຊັ່ນນັ້ນເລີຍ. ແຕ່ແມ່ນ
ຄວາມຜິດບາບນັ້ນແຫລະ ຊຶ່ງອາໄສສິ່ງທີ່
ດີ ເພື່ອນຳຄວາມຕາຍມາສູ່ເຮົາ; ບາບນັ້ນ
ແຫລະ, ໂດຍພຣະບັນຍັດ, ອາດກາຍເປັນ
ບາບທີ່ຊົ່ວຮ້າຍທີ່ສຸດ.
14 ເພາະ ພວກ ເຮົາ ຮູ້ ວ່າ *ພຣະ ບັນ
ຍັດ*ເປັນມາໂດຍຝ່າຍພຣະວິນຍານ; *ແຕ່
ເມື່ອເຮົາຢູ່ພາຍໃຕ້ກົດ,* ເຮົາ*ຍັງມີຕັນຫາ,*
ຖືກຂາຍໃຫ້ຢູ່ພາຍໃຕ້ບາບ.
15 *ແຕ່ບັດນີ້ ເຮົາສົນໃຈຝ່າຍພຣະວິນ
ຍານ;* ເພາະສິ່ງທີ່*ເຮົາຖືກບັນຊາໃຫ້ເຮັດ,
ເຮົາຈະເຮັດ; ແລະ ສິ່ງທີ່ເຮົາຖືກບັນຊາບໍ່
ໃຫ້ຍອມ,* ເຮົາຈະບໍ່ຍອມ.
16 ເພາະສິ່ງທີ່ເຮົາ*ຮູ້ວ່າບໍ່ຖືກຕ້ອງ, ເຮົາ
ຈະບໍ່ເຮັດ; ເພາະສິ່ງທີ່ເປັນບາບ,* ເຮົາກຽດ
ຊັງ.
17 ແລ້ວຖ້າເຮົາບໍ່ເຮັດສິ່ງທີ່ເຮົາ*ບໍ່ຍອມ,*
ເຮົາກໍຍອມຮັບກົດ, ວ່າກົດນັ້ນດີ; *ແລະ ເຮົາ
ບໍ່ຖືກກ່າວໂທດ.*
18 ແລ້ວ ບັດ ນີ້, ບໍ່ ແມ່ນ ເຮົາ ອີກ ຕໍ່
ໄປ ທີ່ ເຮັດ *ບາບ ;* ແຕ່ ເຮົາ*ພະ ຍ າ ຍາມ
ປາບບາບນັ້ນ* ທີ່ຢູ່ໃນຕົວຂອງເຮົາ.
19 ເພາະເຮົາຮູ້ວ່າ ໃນຕົວຂອງເຮົາ, ນັ້ນ
ຄື ໃນເນື້ອໜັງຂອງເຮົາ, ບໍ່ມີສິ່ງດີສະຖິດຢູ່;
ເພາະຄວາມປະສົງທີ່ມີຢູ່ກັບເຮົາ, *ແຕ່*ເຮົາ
ບໍ່ພົບເຫັນການປະຕິບັດທີ່ດີເລີຍ, *ມີແຕ່ໃນ
ພຣະຄຣິດເທົ່ານັ້ນ.*
20 ເພາະສິ່ງດີທີ່ເຮົາອາດຈະ*ໄດ້ເຮັດເມື່ອ
ເຮົາຢູ່ພາຍໃຕ້ກົດ, ເຮົາບໍ່ພົບວ່າເປັນສິ່ງດີ;
ສະນັ້ນ,* ເຮົາຈຶ່ງບໍ່ໄດ້ເຮັດມັນ.
21 ແຕ່ສິ່ງຊົ່ວຊຶ່ງເຮົາຈະບໍ່*ເຮັດພາຍໃຕ້
ກົດ, ເຮົາພົບວ່າເປັນສິ່ງດີ; ສິ່ງນັ້ນ,* ເຮົາ
ເຮັດ.
22 ບັດນີ້ ຖ້າເຮົາເຮັດສິ່ງນັ້ນ, *ຜ່ານຄວາມ
ຊ່ວຍເຫລືອຂອງພຣະຄຣິດ,* ເຮົາຈະບໍ່ເຮັດ
ພາຍໃຕ້ກົດ, ເຮົາຈະບໍ່*ຢູ່ພາຍໃຕ້ກົດ; ແລະ
ເຮົາ ຈະບໍ່ ພະຍາຍາມ ເຮັດຜິດ*ອີກຕໍ່ໄປ,
ແຕ່*ຈະປາບ*ບາບທີ່ຢູ່ໃນຕົວຂອງເຮົາ.
23 ແລ້ວ ເຮົາພົບ*ວ່າ ພາຍ ໃຕ້*ກົດ, ເມື່ອ
ເຮົາເຮັດຄວາມດີ, ຄວາມຊົ່ວກໍຈະ*ຢູ່*ກັບ
ເຮົາ; ເພາະໃນສ່ວນເລິກຂອງໃຈຂອງເຮົາ
ແລ້ວ ເຮົາເບີກບານໃນກົດຂອງພຣະເຈົ້າ.
24 *ແລະ ບັດນີ້* ເຮົາເຫັນກົດອີກຂໍ້ໜຶ່ງ,
*ແມ່ນແຕ່ພຣະບັນຍັດຂອງພຣະຄຣິດ, ແລະ
ມັນຖືກຝັງໄວ້ໃນຈິດໃຈຂອງເຮົາ.*
25 *ແຕ່*ອະໄວຍະວະຂອງເຮົາ ຕໍ່ສູ້ກັບກົດ
ໃນຈິດໃຈຂອງເຮົາ, ແລະ ພາເຮົາໄປສູ່ການ
ເປັນຊະເລີຍຕໍ່ກົດຂອງບາບ ຊຶ່ງຢູ່ໃນອະໄວ
ຍະວະຂອງເຮົາ.
26 *ແລະ ຖ້າເຮົາປາບບາບທີ່ຢູ່ໃນຕົວ
ຂອງເຮົາບໍ່ໄດ້, ກໍເປັນເພາະເນື້ອໜັງທີ່ຮັບ
ໃຊ້ກົດຂອງບາບ;* ໂອ້ ເຮົາຊ່າງຕ່ຳຕ້ອຍ
ແທ້ໆນໍ! ຜູ້ໃດເດທີ່ສາມາດຊ່ວຍເຮົາໃຫ້ພົ້ນ
ຈາກຮ່າງກາຍທີ່ຕາຍເປັນນີ້ໄດ້?
27 ເຮົາຂໍຂອບພຣະໄທພຣະເຈົ້າໂດຍ
ທາງພຣະເຢຊູຄຣິດ ອົງເປັນພຣະຜູ້ເປັນ
ເຈົ້າຂອງພວກເຮົາ, *ເຫດສະນັ້ນ,* ທາງດ້ານ
ຈິດໃຈຂອງເຮົາ, ເຮົາຮັບໃຊ້ກົດຂອງພຣະ
ເຈົ້າ.

**ປຈສ, ໂຣມ 8:8.** ປຽບທຽບໃສ່ກັບ ໂຣມ 8:8

ຄົນທີ່ເປັນໄປຕາມວິທີທາງຂອງເນື້ອໜັງ ບໍ່ສາມາດເຮັດໃຫ້ພຣະເຈົ້າພໍພຣະໄທ.

8 ສະນັ້ນ ແລ້ວ ຄົນທີ່ເປັນ*ໄປຕາມ*ເນື້ອໜັງ ບໍ່ສາມາດເຮັດໃຫ້ພຣະເຈົ້າພໍພຣະໄທ.

**ປຈສດ ໂຣມ 8:29–30.** ປຽບທຽບໃສ່ກັບ ໂຣມ 8:29–30

ພຣະເຢຊູຄຣິດເຮັດໃຫ້ຄົນຊອບທຳບໍລິສຸດ ໃນການຕຽມສຳລັບຄວາມລອດຂອງພວກເຂົາ.

29 ດ້ວຍວ່າ *ບຸກຄົນ*ທີ່ພຣະອົງສັງເກດຮູ້ລ່ວງໜ້າ, ພຣະອົງກໍໄດ້ກຳນົດໄວ້ກ່ອນເພື່ອໃຫ້*ເຂົາ*ເປັນຕາມແບບລັກສະນະ*ຂອງພຣະອົງເອງ,* ເພື່ອພຣະອົງຈະໄດ້ເປັນບຸດກົກໃນທ່າມກາງພວກນ້ອງຫລາຍຄົນ.
30 ຍິ່ງໄປກວ່ານັ້ນ, *ບຸກຄົນໃດ*ທີ່ພຣະອົງໄດ້ກຳນົດໄວ້ລ່ວງໜ້າ, *ບຸກຄົນນັ້ນ*ພຣະອົງໄດ້ເອີ້ນ, *ບຸກຄົນນັ້ນ*ພຣະອົງໄດ້*ເຮັດໃຫ້ບໍລິສຸດ*ນຳອີກ; ແລະ *ບຸກຄົນໃດ*ທີ່ພຣະອົງໄດ້*ເຮັດໃຫ້ບໍລິສຸດ,* ພຣະອົງກໍໄດ້ມອບສະຫງ່າລາສີໃຫ້*ບຸກຄົນນັ້ນ*ເໝືອນກັນ.

**ປຈສ, ໂຣມ 13:6–7.** ປຽບທຽບໃສ່ກັບ ໂຣມ 13:6–7

ຄົນທີ່ນັບຖືສິດອຳນາດບ້ານເມືອງ ເຮັດໃຫ້ການນັບຖືພຣະເຈົ້າຍິ່ງໃຫຍ່ກວ່າ ແລະ ສົມບູນກວ່າ.

6 ຍ້ອນເຫດຜົນຢ່າງດຽວກັນນີ້ແຫລະ ພວກເຈົ້າຈົ່ງອຸທິດຖວາຍ ແລະ *ຈົ່ງເສຍພາສີໃຫ້ພວກເພິ່ນ*ນຳອີກ; ເພາະພວກເພິ່ນເປັນຜູ້ຮັບໃຊ້ຂອງພຣະເຈົ້າ, ພວກເພິ່ນກຳລັງເຮັດໜ້າທີ່ນີ້ຢູ່.
7 *ແຕ່ກ່ອນອື່ນໝົດ,* ຈົ່ງໃຫ້ແກ່ທຸກຄົນຕາມທີ່ພວກເຂົາຄວນໄດ້ຮັບ, *ອີງຕາມທຳນຽມ,* ສ່ວຍສາອາກອນຄວນໃຫ້ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນ, ພາສີຄວນໃຫ້ແກ່ຜູ້ໃດຈົ່ງໃຫ້ແກ່ຜູ້ນັ້ນ, *ເພື່ອວ່າການອຸທິດຖວາຍຂອງທ່ານ ຈະຖືກກະທຳໄປ* ໃນຄວາມຢຳເກງ*ພຣະອົງ*ທີ່ຄວນ*ຖືກຢຳເກງ,* ແລະກຽດຕິຍົດຄວນໃຫ້ແກ່*ພຣະອົງ* ທີ່ຄວນ*ໄດ້ຮັບ.*

**ປຈສ, 1 ໂກຣິນໂທ 7:1–2, 5, 26, 29–33, 38.** ປຽບທຽບໃສ່ກັບ 1 ໂກຣິນໂທ 7:1–2, 5, 26, 29–38

ໂປໂລສອນວ່າ ການແຕ່ງງານເປັນສິ່ງທີ່ໜ້າເພິ່ງປາດຖະໜາ. ເຖິງຢ່າງໃດກໍຕາມ, ຄົນທີ່ຖືກເອີ້ນໃຫ້ເປັນຜູ້ສອນສາດສະໜາ, ຈະຮັບໃຊ້ພຣະເຈົ້າໄດ້ດີກວ່າ ຖ້າເຂົາເຈົ້າຍັງໂສດ ໃນໄລຍະທີ່ເຂົາເຈົ້າປະຕິບັດສາດສະໜາກິດຂອງເຂົາເຈົ້າ.

1 ບັດນີ້ ກ່ຽວກັບສິ່ງທີ່ພວກເຈົ້າໄດ້ຂຽນເຖິງຂ້າພະເຈົ້າ, *ບອກວ່າ,* ເປັນການດີທີ່ຜູ້ຊາຍບໍ່ແຕະຕ້ອງຜູ້ຍິງ.
2 ເຖິງຢ່າງໃດກໍຕາມ, *ຂ້າພະເຈົ້າກ່າວວ່າ* ເພື່ອຫລີກເວັ້ນຈາກການຫລິ້ນຊູ້, ຊາຍທຸກຄົນຄວນມີເມຍຂອງຕົນ, ແລະ ຍິງທຸກຄົນກໍຄວນມີຜົວຂອງຕົນ.
5 ຢ່າ*ແຍກກັນຢູ່,* ນອກຈາກໄດ້ຕົກລົງກັນກ່ອນເປັນການຊົ່ວຄາວ, ເພື່ອອຸທິດຕົນໃນການຖືສິນອົດເຂົ້າ ແລະ ອະທິຖານ; ແລະໃຫ້ກັບມາຢູ່ນຳກັນອີກ, ເພື່ອບໍ່ໃຫ້ຊາຕານມາຊັກຈູງໃຫ້ພວກເຈົ້າຫລົງເຮັດຜິດ.
26 ສະນັ້ນ ຂ້າພະເຈົ້າຈຶ່ງເຫັນວ່າ ມັນເປັນການດີສຳລັບຄວາມລຳບາກທີ່ມີຢູ່ດຽວນີ້, ທີ່ຊາຍຄົນໜຶ່ງຈະຢູ່ຕາມຖານະທີ່ຕົນເປັນຢູ່ ເພື່ອລາວອາດຈະ*ເຮັດຄວາມດີໄດ້ຫລາຍຂຶ້ນ.*
29 ແຕ່*ຂ້າພະເຈົ້າກ່າວກັບພວກທ່ານທີ່ຖືກເອີ້ນໃຫ້ມາສູ່ການປະຕິບັດສາດສະໜາກິດ. ເພາະ*ຂ້າພະເຈົ້າກ່າວເລື່ອງນີ້, ອ້າຍນ້ອງທັງຫລາຍເອີຍ, ກໍເພາະວ່າ*ເວລາທີ່ເຫລືອຢູ່*ກໍສັ້ນ*ເຂົ້າມາ*ແລ້ວ, *ທີ່ພວກທ່ານຈະຖືກສົ່ງໄປສູ່ການປະຕິບັດສາດສະໜາ*

*ກົດ. ເຖິງແມ່ນຜູ້ທີ່*ແຕ່ງງານແລ້ວ *ກໍໃຫ້*ເປັນ
ເໝືອນ ກັບ ວ່າ ຍັງ ບໍ່ ໄດ້ ແ ຕ່ງ ງານ; *ເພາະ
ພວກທ່ານໄດ້ຖືກເອີ້ນ ແລະ ຖືກເລືອກ ໃຫ້
ເຮັດວຽກງານຂອງພຣະຜູ້ເປັນເຈົ້າ.*

30 ແລະ *ກັບຄົນທີ່*ຮ້ອງໄຫ້, ກໍເໝືອນກັບ
ວ່າບໍ່ຮ້ອງໄຫ້; ແລະ ກັບຄົນທີ່ປິຕິຍິນດີ, ໃຫ້
ເປັນເໝືອນບໍ່ປິຕິຍິນດີ, ແລະ ຄົນທີ່ຊື້, ໃຫ້
ເປັນເໝືອນດັ່ງບໍ່ໄດ້ສິ່ງໃດເລີຍ;

31 ແລະ ໃຫ້ຜູ້ທີ່ໃຊ້ສິ່ງຂອງໃນໂລກນີ້,
ເປັນເໝືອນກັບວ່າບໍ່ໄດ້ *ໃຊ້*ມັນ; ເພາະລະ
ບົບຂອງໂລກນີ້ ກຳລັງລ່ວງພົ້ນໄປ.

32 *ອ້າຍນ້ອງທັງຫລາຍເອີຍ,* ແຕ່*ຂ້າພະ
ເຈົ້າຢາກໃຫ້ພວກທ່ານຂະຫຍາຍການເອີ້ນ
ຂອງພວກທ່ານ.* ຂ້າພະເຈົ້າບໍ່ຢາກໃຫ້ພວກ
ທ່ານກະວົນກະວາຍໃຈ. ເພາະຊາຍທີ່ບໍ່ແຕ່ງ
ງານ, ຈະເປັນຫ່ວງນຳສິ່ງທີ່ເປັນຂອງພຣະຜູ້
ເປັນເຈົ້າ, ຈະພະຍາຍາມເຮັດໃຫ້ພຣະຜູ້ເປັນ
ເຈົ້າພໍພຣະໄທ; *ສະນັ້ນ ລາວຈຶ່ງໄດ້ຮັບໄຊ
ຊະນະ.*

33 ແຕ່ ຊາຍ ທີ່ ແຕ່ງ ງານ ແລ້ວ, ຈະ ເປັນ
ຫ່ວງ ນຳສິ່ງທີ່ ເປັນ ຂອງ ໂລກ, ຈະ ພະ ຍາ
ຍາມ ເອົາ ໃຈ ເມຍ ຂອງຕົນ; *ສະນັ້ນ ມັນຈຶ່ງ
ແຕກຕ່າງ, ເພາະລາວຈະຖືກຂັດຂວາງ.*

38 ສະນັ້ນ ຜູ້ໃດທີ່ຍອມ*ຕົນ*ເຂົ້າການແຕ່ງ
ງານ ກໍເຮັດດີຢູ່; ແຕ່ຜູ້ໃດທີ່ບໍ່ຍອມ*ຕົນ*ເຂົ້າ
ການແຕ່ງງານ ກໍເຮັດດີກວ່າ.

**ປຈສ, 1 ໂກຣິນໂທ 15:40.** ປຽບທຽບໃສ່
ກັບ 1 ໂກຣິນໂທ 15:40

ມີລັດສະໝີພາບຢູ່ສາມລະດັບ ໃນການຟື້ນຄືນຊີວິດ.

40 ແລະ ຮ່າງ ກາຍ ຂອງ ຊັ້ນ ສູງ ດ້ວຍ,
ແລະ ຮ່າງກາຍ ຂອງ ຊັ້ນ ກາງ, ແລະ *ຮ່າງ
ກາຍຂອງຊັ້ນຕ່ຳ;* ແຕ່ລັດສະໝີພາບຂອງ
ຊັ້ນສູງກໍຢ່າງໜຶ່ງ; ແລະ ຊັ້ນກາງກໍອີກຢ່າງ
ໜຶ່ງ; *ແລະ ຊັ້ນຕ່ຳກໍຢ່າງໜຶ່ງອີກ.*

**ປຈສ, 2 ໂກຣິນໂທ 5:16.** ປຽບທຽບໃສ່
ກັບ 2 ໂກຣິນໂທ 5:16

ໂປໂລແນະນຳໄພ່ພົນຂອງພຣະເຈົ້າບໍ່ໃຫ້ດຳລົງຊີ
ວິດຕາມທາງຂອງເນື້ອໜັງ.

16 ດັ່ງນັ້ນ, ນັບແຕ່ນີ້ຕໍ່ໄປ ພວກເຮົາຈະ
ບໍ່*ດຳລົງຊີວິດ*ຕາມເນື້ອໜັງ*ອີກແລ້ວ; ແທ້
ຈິງແລ້ວ, ເຖິງແມ່ນວ່າ ຄັ້ງໜຶ່ງພວກເຮົາ
ເຄີຍດຳລົງຊີວິດຕາມເນື້ອໜັງກໍຕາມ, ແຕ່
ນັບແຕ່ເມື່ອ*ພວກເຮົາຮູ້ຈັກພຣະຄຣິດ, ບັດ
ນີ້ ນັບແຕ່ນີ້ຕໍ່ໄປ ພວກເຮົາຈະບໍ່*ດຳລົງຊີວິດ
ຕາມເນື້ອໜັງ*ອີກແລ້ວ.

**ປຈສ, ຄາລາເຕຍ 3:19–20.** ປຽບທຽບ
ໃສ່ກັບ ຄາລາເຕຍ 3:19–20

ໂມເຊເປັນຜູ້ເປັນກາງຂອງພັນທະສັນຍາທຳອິດ, ຫລື
ກົດ. ພຣະເຢຊູຄຣິດເປັນຜູ້ເປັນກາງຂອງພັນທະສັນ
ຍາໃໝ່.

19 ດັ່ງນັ້ນແລ້ວ, ໄດ້ມີ*ກົດ*ຕື່ມເພາະການ
ລ່ວງລະເມີດທັງຫລາຍ, ຈົນກວ່າເຊື້ອສາຍ
ຈະ ມາ ຊຶ່ງຜູ້ຄົນ ເຫລົ່ານັ້ນ ໄດ້ຮັບ ສັນຍາ
*ໃນກົດທີ່ໄດ້ມອບໃຫ້ແກ່ໂມເຊ, ຜູ້*ຖືກແຕ່ງ
ຕັ້ງ ໂດຍ*ມືຂອງທູດ ເພື່ອ*ໃຫ້ເປັນຜູ້ເປັນ
ກາງ*ຂອງພັນທະສັນຍາທຳອິດນີ້, (ກົດ.)*

20 ບັດນີ້ ຜູ້ເປັນກາງ*ຜູ້ນີ້* ບໍ່ໄດ້ເປັນຜູ້ເປັນ
ກາງຂອງ*ພັນທະສັນຍາໃໝ່; ແຕ່ມີຜູ້ເປັນ
ກາງຄົນໜຶ່ງຂອງພັນທະສັນຍາໃໝ່, ຊຶ່ງ
ເປັນພຣະຄຣິດ, ດັ່ງທີ່ມັນໄດ້ຖືກຂຽນໄວ້
ໃນກົດ ກ່ຽວກັບຄຳສັນຍາທີ່ໄດ້ເຮັດໄວ້ ກັບ
ອັບຣາຮາມ ແລະ ເຊື້ອສາຍຂອງເພິ່ນ. ບັດ
ນີ້ ພຣະຄຣິດເປັນຜູ້ເປັນກາງຂອງຊີວິດ;
ເພາະນີ້ຄືຄຳສັນຍາຊຶ່ງພຣະເຈົ້າໄດ້ເຮັດໄວ້
ກັບອັບຣາຮາມ.*

**ປຈສ, ເອເຟໂຊ 4:26.** ປຽບທຽບໃສ່ກັບ
ເອເຟໂຊ 4:26

ການໃຈຮ້າຍທີ່ບໍ່ຊອບທຳເປັນຄວາມຜິດບາບ.

26 *ທ່ານ*ໃຈ ຮ້າຍ ໄດ້, ແລະ ບໍ່ ໃຫ້ ເກີດ ການ*ຜິດບາບ ໄດ້ບໍ?* ຢ່າ ໃຈຮ້າຍຢູ່ຈົນເຖິງ ຕາເວັນຕົກດິນ;

**ປຈສ, ໂກໂລຊາຍ 2:21–22.** ປຽບທຽບ ໃສ່ກັບ ໂກໂລຊາຍ 2:20–23

ບັນຍັດຂອງມະນຸດ ອາດມີຄ່າໃນຄຳສອນ ດັ່ງເຊັ່ນ ການບັງຄັບຕົນເອງ, ແຕ່ມັນບໍ່ເປັນການນັບຖືພຣະ ເຈົ້າ ຫລື ຊ່ວຍມະນຸດໃຫ້ລອດ.

21 *ຊຶ່ງເປັນຕາມແບບແຜນຂອງຄຳສອນ ແລະ ບັນຍັດຂອງມະນຸດ, ທີ່ສອນພວກເຈົ້າ ວ່າ* ຢ່າຈັບ, ຢາຊີມ, ຢ່າແຕະຕ້ອງ; *ທັງໝົດ ນັ້ນ* ຕ້ອງເກີດວິບັດເມື່ອໃຊ້ມັນ.

22 ຈິງຢູ່ ສິ່ງເຫລົ່ານີ້ເບິ່ງທ່າທີເໝືອນ ມີປັນຍາ ຄືການເຕັມໃຈນະມັດສະການ, ການຖ່ອມຕົວລົງ, ການທໍລະມານຮ່າງ ກາຍ ຊຶ່ງບໍ່ມີປະໂຫຍດອັນໃດ *ໃນການຕໍ່ສູ້ ກັບຄວາມປາດຖະໜາຝ່າຍເນື້ອກາຍ,* ທັງ ບໍ່ເປັນກາບນັບຖື*ພຣະເຈົ້າ*ແຕ່ຢ່າງໃດ.

**ປຈສ, 1 ເທສະໂລນິກ 4:15.** ປຽບທຽບ ໃສ່ກັບ 1 ເທສະໂລນິກ 4:15

ຜູ້ຄົນທີ່ຊອບທຳທີ່ຍັງມີຊີວິດຢູ່ໃນເວລາທີ່ພຣະຜູ້ເປັນ ເຈົ້າສະເດັດມາ ຈະບໍ່ໄດ້ປຽບຜູ້ຕາຍທີ່ຊອບທຳ.

15 ໃນຂໍ້ນີ້ ພວກເຮົາບອກພວກເຈົ້າຕາມ ພຣະຄຳຂອງພຣະຜູ້ເປັນເຈົ້າ, ວ່າ*ຜູ້ຄົນ*ທີ່ມີ ຊີວິດຢູ່ *ໃນເວລາ*ທີ່ພຣະຜູ້ເປັນເຈົ້າສະເດັດ ມາ, ຈະບໍ່ສາມາດລ່ວງໜ້າໄປກ່ອນຄົນທີ່ ຫລັບໄປ *ຜູ້ທີ່ລໍຖ້າການສະເດັດມາຂອງ ພຣະຜູ້ເປັນເຈົ້າ.*

**ປຈສ, 2 ເທສະໂລນິກ 2:2–3, 7–9.** ປຽບທຽບໃສ່ກັບ 2 ເທສະໂລນິກ 2:2–9

ຊາຕານຈະກໍ່ໃຫ້ເກີດການຕົກໄປ ຫລື ການປະຖິ້ມ ຄວາມເຊື່ອ ກ່ອນພຣະຜູ້ເປັນເຈົ້າຈະສະເດັດກັບມາ.

2 ຢ່າໃຫ້ຈິດໃຈຂອງພວກທ່ານປັ່ນປ່ວນ, ຫລື ສະທ້ານຕົກໃຈ*ຈາກຈົດໝາຍ, ຍົກເວັ້ນ ແຕ່ພວກທ່ານໄດ້ຮັບມັນຈາກພວກເຮົາ;* ບໍ່ ວ່າຈະມາດ້ວຍທາງວິນຍານ, ຫລື ມາທາງ ຄຳເວົ້າ, ໂດຍອ້າງວ່າ ວັນຂອງພຣະຄຣິດ ມາເຖິງແລ້ວ.

3 ຢ່າ ໃຫ້ ຄົນ ໃດ ຫລອກ ລວງ ພວກ ທ່ານໃນທາງໃດທາງໜຶ່ງເລີຍ; ເພາະວັນ ນັ້ນຈະບໍ່ມາເຖິງ ຈົນກວ່າການຕົກໄປຈະ ເກີດຂຶ້ນກ່ອນ ແລະ ຜູ້ຊົ່ວຮ້າຍ, ບຸດແຫ່ງ ຄວາມຈິບຫາຍ, ຈະປະກົດຕົວຂຶ້ນ.

7 ເພາະອຳນາດອັນລຶກລັບແຫ່ງຄວາມ ຊົ່ວຮ້າຍກໍດຳເນີນການຢູ່ແລ້ວ, *ແລະ ມັນຄື ຜູ້ທີ່ທຳງານຢູ່ແລ້ວໃນເວລານີ້, ແລະ ພຣະ ຄຣິດຍອມໃຫ້ມັນເຮັດ,* ຈົນກວ່າຈະເຖິງ ເວລາທີ່ຈະເອົາມັນອອກໄປຈາກທາງ.

8 ແລະ ແລ້ວ*ຄົນ*ຊົ່ວຜູ້ນັ້ນຈະຖືກເປີດ ເຜີຍ, ຜູ້ຊຶ່ງພຣະຜູ້ເປັນເຈົ້າຈະປະຫານມັນ ເສຍດ້ວຍວິນຍານແຫ່ງພຣະໂອດຂອງ ພຣະອົງ, ແລະ ຈະທຳລາຍດ້ວຍຄວາມສະ ຫວ່າງຂອງການສະເດັດມາຂອງພຣະອົງ.

9 *ແທ້ຈິງແລ້ວ, ພຣະຜູ້ເປັນເຈົ້າ, ແມ່ນແຕ່ ພຣະເຢຊູ,* ຜູ້ຊຶ່ງຈະບໍ່ສະເດັດມາ *ຈົນກວ່າ ການຕົກໄປຈະເກີດຂຶ້ນ*ກ່ອນ, ໂດຍວຽກ ງານຂອງຊາຕານ ດ້ວຍອຳນາດທັງໝົດ, ແລະ ດ້ວຍເຄື່ອງໝາຍ ແລະ ການອັດສະ ຈັນທີ່ຈອມປອມ,

**ປຈສ, 1 ຕີໂມທຽວ 2:4.** ປຽບທຽບໃສ່ກັບ 1 ຕີໂມທຽວ 2:4

ພຣະຄຣິດເປັນພຣະບຸດອົງດຽວທີ່ຖືກຳເນີດ ແລະ ເປັນຜູ້ເປັນກາງ.

4 *ຜູ້ປະສົງ*ຢາກໃຫ້ມະນຸດທຸກຄົນໄດ້ຮັບ ຄວາມລອດ, ແລະ ມາສູ່ຄວາມຮູ້ເລື່ອງ ຄວາມຈິງ *ຊຶ່ງຢູ່ໃນພຣະເຢຊູຄຣິດ, ຜູ້ເປັນ ພຣະບຸດອົງດຽວທີ່ຖືກຳເນີດຂອງພຣະເຈົ້າ, ແລະ ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ເປັນກາງ*

*ລະຫວ່າງພຣະເຈົ້າກັບມະນຸດ; ຜູ້ເປັນພຣະເຈົ້າອົງດຽວ, ແລະ ມີອຳນາດເໜືອກວ່າມະນຸດທັງປວງ.*

**ປຈສ, 1 ຕີໂມທຽວ 3:15–16.** ປຽບທຽບໃສ່ກັບ 1 ຕີໂມທຽວ 3:15–16

ສາດສະໜາຈັກໄດ້ຖືກຈັດຕັ້ງຂຶ້ນ ເທິງຫລັກທຳທີ່ສຳຄັນ ວ່າພຣະເຢຊູໄດ້ກາຍເປັນມະນຸດ, ໄດ້ສອນພຣະກິດຕິຄຸນ, ແລະ ໄດ້ກັບຄືນໄປຫາພຣະບິດາຂອງພຣະອົງ. ໝາຍເຫດ: ການປ່ຽນທີ່ເລີກຊຶ້ງຢູ່ໃນຂໍ້ດັ່ງຕໍ່ໄປນີ້ ເນັ້ນໜັກວ່າ "ເສົາ ແລະ ຮາກແຫ່ງຄວາມຈິງ" ຄືພຣະເຢຊູຄຣິດ.

15 ແຕ່ຖ້າຫາກເຮົາມາຊ້າ, ທ່ານກໍຈະໄດ້ຮູ້ວ່າ ທ່ານຄວນປະຕິບັດຢ່າງໃດໃນຄອບຄົວຂອງພຣະເຈົ້າ, ຄືໃນສາດສະໜາຈັກຂອງພຣະເຈົ້າທີ່ຊົງພຣະຊົນຢູ່.

16 ເສົາ ແລະ ຮາກແຫ່ງຄວາມຈິງ (ແລະ ທາງຂອງພຣະເຈົ້າອັນຍິ່ງໃຫຍ່ ແລະ ລຶກລັບ,) *ຄື,* ພຣະເຈົ້າໄດ້ປະກົດໃນສະພາບມະນຸດ, ໄດ້ຖືກສະແດງໃຫ້ເຫັນເປັນຜູ້ຊອບທຳໂດຍພຣະວິນຍານ, ໄດ້ສະແດງພຣະອົງໃຫ້ແກ່ເຫລົ່າທູດ, ໄດ້ມີຜູ້ປະກາດເລື່ອງພຣະອົງໃນທ່າມກາງຄົນຕ່າງຊາດ, ໄດ້ມີຜູ້ເຊື່ອຖືພຣະອົງທົ່ວທັງໂລກ, ແລະ ໄດ້ຖືກຮັບຂຶ້ນສູ່ສະຫງ່າລາສີ.

**ປຈສ, 1 ຕີໂມທຽວ 6:15–16.** ປຽບທຽບໃສ່ກັບ 1 ຕີໂມທຽວ 6:15–16

ຜູ້ທີ່ມີຄວາມສະຫວ່າງຂອງຄວາມເປັນອະມະຕະ (ພຣະກິດຕິຄຸນ) ຢູ່ກັບຕົນ ສາມາດເຫັນພຣະເຢຊູ.

15 ຊຶ່ງໃນເວລາຂອງພຣະອົງ, ພຣະອົງຈະປະກົດ, ຜູ້ໄດ້ຮັບພອນ ແລະ ມີລິດອຳນາດສູງສຸດແຕ່ພຣະອົງດຽວ, ເປັນມະຫາກະສັດເໜືອກະສັດທັງປວງ, ເປັນພຣະຜູ້ເປັນເຈົ້າເໜືອເຈົ້ານາຍທັງປວງ, *ຂໍພຣະກຽດ ແລະ ອຳນາດອັນເປັນນິດຈົ່ງມີແກ່ພຣະອົງ;*

16 *ຜູ້ທີ່ມະນຸດບໍ່ເຄີຍເຫັນຈັກເທື່ອ, ຫລືສາມາດຫລຽວເຫັນ, ພຣະອົງຜູ້ທີ່ມະນຸດບໍ່ສາມາດເຂົ້າໃກ້, ພຽງແຕ່ຜູ້ທີ່ມີຄວາມສະຫວ່າງ ແລະ ຄວາມຫວັງແຫ່ງຄວາມເປັນອະມະຕະສະຖິດຢູ່ກັບເຂົາເທົ່ານັ້ນ ທີ່ສາມາດເຫັນ.*

**ປຈສ, ເຮັບເຣີ 1:6–7.** ປຽບທຽບໃສ່ກັບ ເຮັບເຣີ 1:6–7

ເຫລົ່າທູດສະຫວັນເປັນວິນຍານຂອງຜູ້ຮັບໃຊ້.

6 ແລະ ອີກເທື່ອໜຶ່ງ, ເມື່ອພຣະອົງໄດ້ສົ່ງພຣະບຸດກົກເຂົ້າມາໃນໂລກ, ພຣະອົງໄດ້ກ່າວວ່າ, ແລະ ໃຫ້ເຫລົ່າທູດຂອງພຣະເຈົ້າທຸກອົງນະມັດສະການພຣະອົງ, *ຜູ້ເຮັດໃຫ້ຜູ້ຮັບໃຊ້ຂອງພຣະອົງເປັນແປວໄຟອັນຮ້ອນກ້າ.*

7 ແລະ ກ່ຽວກັບເຫລົ່າທູດ ພຣະອົງໄດ້ກ່າວວ່າ *ເຫລົ່າທູດເປັນວິນຍານຂອງຜູ້ຮັບໃຊ້.*

**ປຈສ, ເຮັບເຣີ 4:3.** ປຽບທຽບໃສ່ກັບ ເຮັບເຣີ 4:3

ຜູ້ທີ່ເຮັດໃຈແຂງກະດ້າງຈະບໍ່ລອດ; ຜູ້ທີ່ກັບໃຈຈະໄດ້ເຂົ້າໄປໃນທີ່ພັກຂອງພຣະຜູ້ເປັນເຈົ້າ.

3 ເພາະເຮົາຜູ້ທີ່ໄດ້ເຊື່ອແລ້ວ ໄດ້ເຂົ້າໄປໃນທີ່ພັກ, ດັ່ງທີ່ພຣະອົງໄດ້ກ່າວວ່າ, ດັ່ງທີ່ເຮົາໄດ້ສາບານດ້ວຍຄວາມເຄືອງໃຈ, ຖ້າພວກເຂົາ*ຍັງເຮັດໃຈແຂງກະດ້າງຢູ່* ພວກເຂົາຈະ*ບໍ່ໄດ້ເຂົ້າໄປ*ໃນທີ່ພັກຂອງເຮົາ; *ພ້ອມນີ້, ເຮົາຍັງໄດ້ສາບານວ່າ ຖ້າຫາກພວກເຂົາບໍ່ເຮັດໃຈແຂງກະດ້າງ, ພວກເຂົາຈະໄດ້ເຂົ້າໄປໃນທີ່ພັກຂອງເຮົາ;* ເຖິງແມ່ນວ່າວຽກງານຂອງເຮົາໄດ້ຖືກຕຽມໄວ້ຮຽບຮ້ອຍແລ້ວ, (*ຫລື ສຳເລັດແລ້ວ,*) ນັບຕັ້ງແຕ່ການວາງຮາກຖານຂອງໂລກພຸ້ນ.

**ປຈສ, ເຮັບເຣີ 6:1–10.** ປຽບທຽບໃສ່ກັບ ເຮັບເຣີ 6:1–10

ຫລັກທຳຂອງຄຳສອນຂອງພຣະຄຣິດ ນຳໄປສູ່ຄວາມດີພ້ອມ.

1 ສະນັ້ນ ໂດຍ*ທີ່ບໍ່*ປະຫລັກທຳແຫ່ງຄຳສອນຂອງພຣະຄຣິດ, ຂໍໃຫ້ເຮົາຈົ່ງກ້າວໄປສູ່ຄວາມດີພ້ອມທຸກຢ່າງ; ໂດຍບໍ່ວາງຮາກຖານອີກໃນເລື່ອງການກັບໃຈຈາກວຽກງານທີ່ຕາຍແລ້ວ, ແລະ ໃນເລື່ອງສັດທາທີ່ມີຕໍ່ພຣະເຈົ້າ.

2 ຄຳສັ່ງສອນເຖິງເລື່ອງບັບຕິສະມາ, ພິທີວາງມື, ແລະ ການຟື້ນຄືນຊີວິດຂອງຄົນຕາຍ, ແລະ ການພິພາກສາລົງໂທດອັນເປັນນິດ.

3 ແລະ *ພວກເຮົາຈະກ້າວໄປສູ່ຄວາມດີພ້ອມທຸກຢ່າງ* ຖ້າພຣະເຈົ້າອະນຸຍາດ.

4 ເພາະ*ພຣະອົງໄດ້ເຮັດໃຫ້ມັນ*ເປັນໄປບໍ່ໄດ້ສຳລັບຄົນເຫລົ່ານັ້ນ ທີ່ໄດ້ຮັບຄວາມສະຫວ່າງມາເທື່ອໜຶ່ງແລ້ວ ແລະ ຊີມລົດຂອງປະທານຈາກສະຫວັນ, ແລະ ໄດ້ຮັບພຣະວິນຍານບໍລິສຸດ,

5 ແລະ ໄດ້ຊີມລົດອັນດີແຫ່ງພຣະຄຳຂອງພຣະເຈົ້າ ກັບລິດເດດແຫ່ງຄາວທີ່ຈະມາເຖິງນັ້ນ,

6 ຖ້າພວກເຂົາເຫລົ່ານັ້ນໄດ້ຕົກເສຍໄປແລ້ວ, ກໍເຫລືອວິໄສທີ່ຈະນຳພວກເຂົາ*ກັບຄືນ*ມາສູ່ການກັບໃຈອີກໄດ້; ເພາະພວກເຂົາເອງຄຶງພຣະບຸດຂອງພຣະເຈົ້າເສຍ ແລະ ເຮັດໃຫ້ພຣະອົງໄດ້ຮັບການປະຈານຂາຍໜ້າ.

7 ເພາະ*ມື້ນັ້ນຈະມາເຖິງ* ເມື່ອພື້ນດິນຕອນໃດດູດຮັບເອົານ້ຳຝົນທີ່ຕົກໃສ່ຢູ່ເລື້ອຍ, ແລະ ເກີດພືດຜົນງອກຂຶ້ນໃຫ້ປະໂຫຍດແກ່ຄົນທີ່*ອາໄສຢູ່ໃນນັ້ນ, ຜູ້ຊຶ່ງບັດນີ້*ໄດ້ຮັບພຣະພອນຈາກພຣະເຈົ້າ, *ຈະຖືກເຮັດໃຫ້ສະອາດດ້ວຍໄຟ.*

8 *ເພາະ*ພື້ນດິນທີ່ເກີດສົ້ງນໜາມ ກໍນັບວ່າບໍ່ມີຄ່າ, ແລະ ເກືອບຈະຖືກປ້ອຍດ່າແລ້ວ; *ສະນັ້ນພືດຜົນໃດທີ່ບໍ່ເກີດຜົນດີ, ມັນຈະຖືກໂຍນເຂົ້າກອງໄຟ; ຊຶ່ງໃນທີ່ສຸດ*ກໍຈະຖືກເຜົາໄຟເສຍ.

9 ແຕ່ພວກພີ່ນ້ອງເອີຍ, ເຖິງແມ່ນວ່າເຮົາເວົ້າດັ່ງນັ້ນ ເຮົາກໍຍັງເຊື່ອແນ່ວ່າ ທ່າທີຂອງພວກເຈົ້າ ມີສິ່ງ*ທີ່*ດີກວ່າທີ່ໄດ້ກ່າວມານັ້ນ ຄືສິ່ງທີ່ກ່ຽວກັບຄວາມລອດ.

10 ເພາະວ່າພຣະເຈົ້າບໍ່ໄດ້ອະຍຸດຕິທຳ, *ສະນັ້ນ ພຣະອົງຈະບໍ່*ລືມການງານທີ່ພວກເຈົ້າໄດ້ເຮັດ ແລະ ຄວາມຮັກທີ່ພວກເຈົ້າໄດ້ສະແດງຕໍ່ພຣະນາມຂອງພຣະອົງ, ຄືການຮັບໃຊ້ໄພ່ພົນຂອງພຣະອົງ ເໝືອນດັ່ງທີ່ພວກເຈົ້າຍັງຮັບໃຊ້ຢູ່.

**ປຈສ, ເຮັບເຣີ 7:3.** ປຽບທຽບໃສ່ກັບ ເຮັບເຣີ 7:3

ເມນຄີເສເດັກເປັນປະໂລຫິດຕາມລະບຽບຂອງພຣະບຸດຂອງພຣະເຈົ້າ. ທຸກຄົນທີ່ຮັບເອົາຖານະປະໂລຫິດນີ້ ສາມາດກາຍເປັນເໝືອນດັ່ງພຣະບຸດຂອງພຣະເຈົ້າ.

3 *ເພາະເມນຄີເສເດັກຜູ້ນີ້ ໄດ້ຖືກແຕ່ງຕັ້ງໃຫ້ເປັນປະໂລຫິດຕາມລະບຽບຂອງພຣະບຸດຂອງພຣະເຈົ້າ, ຊຶ່ງລະບຽບນັ້ນ*ປາດສະຈາກບິດາ, ປາດສະຈາກມານດາ, ປາດສະຈາກເຊື້ອວົງ, ທັງບໍ່ມີການເລີ່ມຕົ້ນຂອງມື້, ຫລື ການສິ້ນສຸດຂອງຊີວິດ. *ແລະ ທຸກຄົນທີ່ໄດ້ຮັບການແຕ່ງຕັ້ງສູ່ຖານະປະໂລຫິດນີ້* ຈະເປັນເໝືອນພຣະບຸດຂອງພຣະເຈົ້າ, ໂດຍ*ຍັງ*ຢູ່ເປັນປະໂລຫິດສືບໄປ.

**ປຈສ, ເຮັບເຣີ 7:19–21.** ປຽບທຽບໃສ່ກັບ ເຮັບເຣີ 7:19–21

ກົດໄດ້ຕຽມຜູ້ຄົນຂອງພຣະເຢຊູ ຜູ້ຊຶ່ງ "ເປັນຜູ້ຮັບປະກັນພັນທະສັນຍາອັນດີກວ່າ."

19 ເພາະ *ກົດໄດ້ຖືກປະຕິບັດປາດສະ
ຈາກຄຳສາບານ* ແລະ ບໍ່ໄດ້ເຮັດໃຫ້ສິ່ງໃດ
ສຳເລັດ, *ພຽງແຕ່*ມີຄວາມຫວັງອັນດີກວ່າ
ໄດ້ເພີ່ມເຕີມເຂົ້າມາ; ໂດຍຄວາມຫວັງນັ້ນ
ພວກເຮົາຈຶ່ງຈະເຂົ້າໄປໃກ້ພຣະເຈົ້າໄດ້.
20 ຕາບໃດທີ່*ມະຫາປະໂລຫິດນີ້*ມີຄຳ
ສາບານ, *ດັ່ງນັ້ນ ພຣະເຢຊູຈຶ່ງກາຍເປັນຜູ້
ຮັບປະກັນພັນທະສັນຍາອັນດີກວ່າ.*
21 (ເພາະປະໂລຫິດຄົນອື່ນໆຮັບຕຳ
ແໜ່ງໂດຍບໍ່ມີຄຳສາບານເລີຍ; ແຕ່ພຣະ
ອົງເປັນປະໂລຫິດໂດຍທາງຄຳສາບານ
ເມື່ອພຣະເຈົ້າກ່າວກັບພຣະອົງວ່າ, ພຣະ
ຜູ້ເປັນເຈົ້າສາບານໄວ້ແລ້ວ ແລະ ຈະບໍ່
ປ່ຽນພຣະໄທວ່າ ທ່ານເປັນປະໂລຫິດ
ຕະຫລອດໄປ ຕາມລະບຽບຂອງເມນຄິເສ
ເດັກ;)

**ປຈສ, ເຮັບເຣີ 7:25–26.** ປຽບທຽບໃສ່
ກັບ ເຮັບເຣີ 7:26–27

ພຣະເຢຊູຖວາຍພຣະອົງເອງ ເປັນເຄື່ອງບູຊາທີ່ບໍລິ
ສຸດ ເພື່ອບາບຂອງພວກເຮົາ.

25 ມະຫາປະໂລຫິດຢ່າງນີ້ແຫລະທີ່
ເໝາະສົມສຳລັບພວກເຮົາ, ຄືເປັນຜູ້ສັກ
ສິດ, ບໍ່ມີພິດໄພ, ບໍ່ໝົ່ນໝອງ, ແຍກຈາກ
ຄົນບາບທັງປວງ, ແລະ ຖືກເຮັດໃຫ້ເປັນ
*ຜູ້ປົກຄອງເໜືອສະຫວັນ;*
26 *ບໍ່ເໝືອນ*ດັ່ງມະຫາປະໂລຫິດຄົນ
ອື່ນໆ ຜູ້ຖວາຍເຄື່ອງບູຊາ*ທຸກໆວັນ,* ຜູ້ຊຶ່ງ
ທຳອິດຖວາຍເພື່ອການບາບ*ຂອງຕົນ*ເອງ,
ແລະ ແລ້ວຖວາຍເພື່ອ*ການບາບຂອງຜູ້
ຄົນ;* ເພາະ*ພຣະອົງບໍ່ຈຳເປັນຕ້ອງຖວາຍ
ເພື່ອການບາບຂອງພຣະອົງເອງ, ເພາະ
ພຣະອົງບໍ່ມີບາບ; ແຕ່ເພື່ອການບາບຂອງ
ຜູ້ຄົນ. ແລະ* ພຣະອົງໄດ້ກະທຳໄປເທື່ອ
ດຽວ, ເມື່ອພຣະອົງຖວາຍພຣະອົງເອງ.

**ປຈສ, ເຮັບເຣີ 11:1.** ປຽບທຽບໃສ່ກັບ
ເຮັບເຣີ 11:1

ສັດທາຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້.

1 ບັດນີ້ ສັດທາຄື*ຄວາມແນ່ນອນ*ໃຈໃນ
ສິ່ງທີ່ເຮົາຫວັງໄວ້, ເປັນຫລັກຖານເຖິງສິ່ງທີ່
ເຮົາຍັງບໍ່ເຫັນກັບຕາ.

**ປຈສ, ເຮັບເຣີ 11:35.** ປຽບທຽບໃສ່ກັບ
ເຮັບເຣີ 11:35

ຄົນຊື່ສັດທີ່ຖືກທໍລະມານເພາະພຣະຄຣິດ ຈະໄດ້ຮັບ
ການຟື້ນຄືນຊີວິດຄັ້ງທຳອິດ.

35 ພວກແມ່ຍິງໄດ້ຮັບເອົາຄົນຕາຍຂອງ
ພວກນາງທີ່ລຸກຂຶ້ນມາມີຊີວິດອີກ; ແລະ
ບາງຄົນກໍໄດ້ຖືກທໍລະມານ, ແຕ່ບໍ່ຍອມຮັບ
ເອົາການປົດປ່ອຍ; ເພື່ອວ່າພວກເຂົາຈະ
ໄດ້ຮັບການຟື້ນຄືນຊີວິດ*ຄັ້ງທຳອິດ.*

**ປຈສ, ຢາໂກໂບ 1:2.** ປຽບທຽບໃສ່ກັບ
ຢາໂກໂບ 1:2

ຄວາມທຸກຍາກລຳບາກ, ບໍ່ແມ່ນການລໍ້ລວງ, ຊ່ວຍ
ຊຳລະເຮົາໃຫ້ບໍລິສຸດ.

2 ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ,
ຈົ່ງຖືວ່າເປັນເລື່ອງໜ້າຊື່ນຊົມທີ່ສຸດເມື່ອ
ພວກທ່ານຕົກຢູ່ໃນ*ຄວາມທຸກຍາກລຳ
ບາກ;*

**ປຈສ, ຢາໂກໂບ 2:1.** ປຽບທຽບໃສ່ກັບ
ຢາໂກໂບ 2:1

ສະມາຊິກບໍ່ຄວນນັບຖືຄົນໜຶ່ງສູງກວ່າອີກຄົນໜຶ່ງ.

1 ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ,
*ພວກທ່ານບໍ່ສາມາດ*ມີສັດທາເຖິງອົງພຣະ
ເຢຊູຄຣິດເຈົ້າຂອງພວກເຮົາ, ພຣະຜູ້ເປັນ
ເຈົ້າແຫ່ງລັດສະໝີພາບ, *ແລະ ຍັງ*ເລືອກ
ໜ້າຄົນ.

**ປຈສ, ຢາໂກໂບ 2:14–21.** ປຽບທຽບ
ໃສ່ກັບ ຢາໂກໂບ 2:14–22

ສັດທາທີ່ບໍ່ມີການປະຕິບັດກໍໄຮ້ຜົນ ແລະ ບໍ່ສາມາດ
ລອດພົ້ນ.

14 ຈະ ມີ*ປະ ໂຫຍດ ຫຍັງ,* ພີ່ ນ້ອງ ທັງ
ຫລາຍ ຂອງ ເຮົາ ເອີຍ, *ຖ້າ*ຄົນ ໜຶ່ງຈະເວົ້າ
ວ່າ ຕົນ ມີສັດທາ, ແຕ່ບໍ່ມີການປະຕິ ບັດ?
ສັດທາຈະເຮັດໃຫ້ລາວລອດພົ້ນໄດ້ບໍ?
15 ແທ້ ຈິງ ແລ້ວ, ຄົນໜຶ່ງ ອາດ ເວົ້າວ່າ,
*ຂ້ອຍ ຈະ ສະ ແດງ ໃຫ້ ເຈົ້າເຫັນວ່າ ຂ້ອຍມີ
ສັດທາ ຊຶ່ງບໍ່ມີການປະຕິບັດ; ແຕ່ເຮົາເວົ້າ
ວ່າ,* ຈົ່ງສະແດງ ໃຫ້ ເຮົາເຫັນສັດທາຂອງ
ເຈົ້າ ຊຶ່ງບໍ່ມີການປະຕິບັດ, ແລະ ຝ່າຍເຮົາ
ຈະສະແດງໃຫ້ເຈົ້າເຫັນສັດທາຂອງເຮົາ
ດ້ວຍການປະຕິບັດຂອງເຮົາ.
16 *ເພາະ*ຖ້າ ພີ່ ນ້ອງຊາຍຍິງຄົນໃດ ບໍ່ມີ
ເຄື່ອງນຸ່ງຫົ່ມ ແລະ ຂາດເຂີນອາຫານປະຈຳ
ວັນ, ແລະ ມີຄົນໃດໃນພວກເຈົ້າເວົ້າແກ່ເຂົາ
ວ່າ, ຈົ່ງໄປເປັນສຸກເທີ້ນ ຂໍໃຫ້ອົບອຸ່ນ ແລະ
ກິນອີ່ມ; ແຕ່*ເຂົາ*ບໍ່ໄດ້ໃຫ້ສິ່ງຂອງທີ່ຕ້ອງການ
ສຳລັບຕົວນັ້ນ; *ສັດທາຂອງເຈົ້າ*ຈະເປັນປະ
ໂຫຍດອັນໃດ*ແກ່ສິ່ງນີ້?*
17 ຢ່າງ ນັ້ນ ແຫລະ ສັດທາກໍຢ່າງດຽວ
ກັນ, ຖ້າບໍ່*ມີ*ການປະຕິບັດ ກໍຕາຍແລ້ວ.
18 *ສະນັ້ນ* ໂອ້ ຄົນໂງ່ເອີຍ, ເຈົ້າຮູ້ບໍວ່າ
ສັດທາທີ່ບໍ່ມີການປະຕິບັດນັ້ນກໍໄຮ້ຜົນ
*ແລະ ບໍ່ສາມາດຊ່ວຍເຈົ້າໃຫ້ລອດ?*
19 ພວກເຈົ້າທີ່ເຊື່ອວ່າ ມີພຣະເຈົ້າຢູ່
ອົງດຽວ ກໍດີຢູ່ແລ້ວ; ສ່ວນພວກຜີມານ
ຮ້າຍກໍເຊື່ອເໝືອນກັນ, ແລະ ຢ້ານຈົນ
ຕົວສັ່ນ; *ພວກເຈົ້າກໍເຮັດໃຫ້ຕົວເອງເປັນ
ຄືກັນກັບພວກມັນ, ໂດຍທີ່ເປັນຄົນບໍ່
ຊອບທຳ.*
20 ອັບ ຣາ ຮາມ ບັນ ພະ ບຸ ລຸດ ຂອງ ເຮົາ
ເປັນຄົນຊອບທຳ ໂດຍການປະຕິບັດ, ໃນ
ການຖວາຍອີຊາກລູກຊາຍຂອງເພິ່ນເທິງ
ແທ່ນບູຊາ.
21 ເຈົ້າກໍເຫັນແລ້ວວ່າ *ການປະຕິບັດ*ກໍ
ໄປຄວບຄູ່ກັບ*ສັດທາ*ຂອງເພິ່ນ, ແລະ ໂດຍ
ການປະຕິບັດ ສັດທາຂອງເພິ່ນຈຶ່ງເຮັດໃຫ້
ດີຄົບຖ້ວນໄດ້.

**ປຈສ, 1 ເປໂຕ 3:20.** ປຽບທຽບໃສ່ກັບ
1 ເປໂຕ 3:20

ວິນຍານບາງດວງໃນຄຸກ ເຄີຍເປັນວິນຍານບໍ່ຊອບ
ທຳໃນສະໄໝຂອງໂນອາ.

20 *ບາງ ຄົນ*ບໍ່ ເຊື່ອ ຟັງ *ໃນ ສະ ໄໝ ຂອງ
ໂນອາ, ໃນ ຂະ ນະ*ທີ່ຄວາມອົດກັ້ນຂອງ
ພຣະເຈົ້າໄດ້ລໍຖ້າ, ໃນຂະນະທີ່ກຳລັງຕຽມ
ເຮືອ, ຊຶ່ງໃນນັ້ນມີໜ້ອຍຄົນ, ນັ້ນຄື ແປດ
ຄົນທີ່ໄດ້ລອດຈາກນ້ຳຖ້ວມ.

**ປຈສ, 1 ເປໂຕ 4:6.** ປຽບທຽບໃສ່ກັບ
1 ເປໂຕ 4:6

ພຣະຄຣິດຕຶຄຸນຖືກສັ່ງສອນແກ່ຄົນທີ່ຕາຍໄປແລ້ວ.

6 *ດ້ວຍ ເຫດ ນີ້ ແ ຫລະ,* ພຣະ ຄຣິດ ຕຶ ຄຸນ
ຈຶ່ງຖືກສັ່ງສອນແກ່ພວກເຂົາ*ຜູ້*ທີ່ຕາຍໄປ,
ເພື່ອພວກເຂົາຈະໄດ້ຮັບການຕັດສິນ ຕາມ
ທາງຂອງມະນຸດໃນເນື້ອໜັງ, ແຕ່*ດຳລົງຊີ
ວິດໃນວິນຍານ* ຕາມ*ພຣະປະສົງຂອງ*ພຣະ
ເຈົ້າ.

**ປຈສ, 1 ເປໂຕ 4:8.** ປຽບທຽບໃສ່ກັບ
1 ເປໂຕ 4:8

ຄວາມໃຈບຸນປ້ອງກັນພວກເຮົາຈາກການເຮັດບາບ.

8 ແລະ ສິ່ງທີ່ສຳຄັນກວ່າສິ່ງອື່ນໃດໝົດ
ຈົ່ງ ມີ ຄວາມ ໃຈບຸນ ຢ່າງ ແໜ້ນ ແຟ້ນ ໃນ
ບັນດາພວກທ່ານ; ເພາະຄວາມໃຈບຸນສາ
ມາດ*ປ້ອງກັນ*ບາບຢ່າງຫລວງຫລາຍ.

**ປຈສ, 2 ເປໂຕ 3:3–13.** ປຽບທຽບໃສ່ກັບ 2 ເປໂຕ 3:3–13

ໃນຍຸກສຸດທ້າຍ, ຜູ້ຄົນຢ່າງຫລວງຫລາຍຈະປະຕິເສດອົງພຣະເຢຊູຄຣິດເຈົ້າ. ເມື່ອພຣະອົງສະເດັດມາ, ໄພພິບັດທາງທຳມະຊາດຈະເກີດຂຶ້ນ. ຖ້າຫາກເຮົາອົດທົນໃນຄວາມຊອບທຳ, ເຮົາຈະໄດ້ຮັບແຜ່ນດິນໂລກໃໝ່.

3 ກ່ອນອື່ນຈົ່ງຮູ້ຂໍ້ນີ້, *ໃນຍຸກສຸດທ້າຍ* ຈະມີຄົນເຍາະເຍີ້ຍ, ມາເວົ້າສຽດສີຕາມໃຈປາດຖະໜາຂອງຕົນ.

4 *ປະຕິເສດອົງພຣະເຢຊູຄຣິດເຈົ້າ,* ແລະຖາມວ່າ, ຄຳທີ່ສັນຍາໄວ້ວ່າ ພຣະອົງຈະສະເດັດມານັ້ນຢູ່ໃສ? ເພາະນັບແຕ່ບັນພະບຸລຸດລ່ວງລັບໄປແລ້ວ, ທຸກສິ່ງທັງປວງ *ຕ້ອງເປັນຢູ່ເໝືອນເດີມ, ແລະ ດຳເນີນຕໍ່ໄປດັ່ງທີ່ເປັນມາ* ນັບຕັ້ງແຕ່ການເລີ່ມຕົ້ນຂອງການສ້າງໂລກ.

5 ເພາະວ່າພວກເຂົາເຮັດຄືລືມຂໍ້ນີ້ເສຍ, ວ່າຟ້າສະຫວັນໄດ້ມີຢູ່ຕັ້ງແຕ່*ບູຮານ,* ແລະແຜ່ນດິນໂລກໄດ້ເກີດຂຶ້ນມາ*ຈາກນ້ຳ* ແລະດ້ວຍທາງນ້ຳ, *ໄດ້ຖືກສ້າງຂຶ້ນດ້ວຍພຣະຄຳຂອງພຣະເຈົ້າ;*

6 *ແລະ ດ້ວຍພຣະຄຳຂອງພຣະເຈົ້າ,* ໂລກໃນສະໄໝບູຮານ ຈຶ່ງຖືກທຳລາຍດ້ວຍນ້ຳຖ້ວມ;

7 ແຕ່ຟ້າສະຫວັນ ແລະ ແຜ່ນດິນໂລກທີ່ມີຢູ່ໃນປະຈຸບັນນີ້, ຖືກຮັກສາໄວ້ *ດ້ວຍພຣະຄຳດຽວກັນນັ້ນ,* ສຳລັບໃຫ້ໄຟເຜົາຜານເສຍ, ຖືກຮັກສາໄວ້ຈົນເຖິງວັນພິພາກສາ ແລະ ວັນພິນາດຂອງບັນດາຄົນອະທຳ.

8 ແຕ່ພວກທີ່ຮັກເອີຍ *ກ່ຽວກັບການສະເດັດມາຂອງພຣະຜູ້ເປັນເຈົ້າ, ເຮົາບໍ່ຢາກໃຫ້ພວກເຈົ້າລືມຂໍ້ນີ້ວ່າ* ຕໍ່ພຣະຜູ້ເປັນເຈົ້າແລ້ວ ວັນດຽວກໍເໝືອນກັບພັນປີ, ແລະ ພັນປີກໍເໝືອນກັບວັນດຽວ.

9 ພຣະຜູ້ເປັນເຈົ້າບໍ່ໄດ້ເສີຍຊ້າ ທີ່ຈະເຮັດໃຫ້ຄຳສັນຍາ *ແລະ ການສະເດັດມາ*ຂອງພຣະອົງສຳເລັດ, ເໝືອນດັ່ງທີ່ບາງຄົນນັ້ນຄິດວ່າຊ້າ; ແຕ່ພຣະອົງອົດທົນດົນນານ*ກັບເຮົາ,* ບໍ່ປະສົງໃຫ້ຜູ້ໃດຜູ້ໜຶ່ງຕ້ອງຈິບຫາຍໄປ, ແຕ່ປາດຖະໜາໃຫ້ຄົນທັງປວງມາສູ່ການກັບໃຈ.

10 ແຕ່ວັນຂອງພຣະຜູ້ເປັນເຈົ້າຈະມາເຖິງເໝືອນດັ່ງຂະໂມຍມາ, ໃນວັນນັ້ນ ຟ້າສະຫວັນຈະ*ຫວັ່ນໄຫວ, ແລະ ແຜ່ນດິນໂລກຈະສັ່ນສະເທືອນ, ແລະ ພູເຂົາຈະລະລາຍ, ແລະ* ສະຫລາຍໄປດ້ວຍສຽງດັງກ້ອງສະໜັ່ນ, ແລະ ໂລກທາດຈະ*ເຕັມ*ໄປດ້ວຍໄຟ; ແລະ ແຜ່ນດິນໂລກກໍ*ຈະເຕັມໄປດ້ວຍໄຟ*ຄືກັນ, ແລະ ວຽກງານທີ່ເສື່ອມເສຍ *ຊຶ່ງ*ຢູ່ໃນນັ້ນ ຈະຖືກເຜົາໄໝ້.

11 *ຖ້າ ຫາກ* ໃນເມື່ອທຸກສິ່ງຈະ*ຖືກທຳລາຍ*ໄປຢ່າງນີ້, ພວກເຈົ້າຄວນຈະເປັນຄົນຢ່າງໃດ ໃນ*ການປະຕິບັດ* ແລະ ໃນການນັບຖືພຣະເຈົ້າ,

12 ຈົ່ງ*ຄອຍ ຖ້າ,* ແລະ *ຕຽມສຳລັບວັນແຫ່ງ*ການສະເດັດມາຂອງ*ພຣະຜູ້ເປັນເຈົ້າ* ຊຶ່ງໃນນັ້ນ *ສິ່ງທີ່ເສື່ອມເສຍຂອງ*ຟ້າສະຫວັນຈະຖືກເຜົາໄໝ້, ຈະສະຫລາຍໄປ, ແລະ *ພູເຂົາ*ຈະລະລາຍດ້ວຍໄຟ?

13 ເຖິງຢ່າງໃດກໍຕາມ, *ຖ້າເຮົາຈະອົດທົນ,* ເຮົາຈະ*ຖືກຮັກສາໄວ້* ຕາມຄຳສັນຍາຂອງພຣະອົງ. *ແລະ ເຮົາ*ຈະຄອຍຖ້າຟ້າສະຫວັນໃໝ່, ແລະ ແຜ່ນດິນໃໝ່ ຊຶ່ງຄວາມຊອບທຳຈະຕັ້ງຢູ່ທີ່ນັ້ນ.

**ປຈສ, 1 ໂຢຮັນ 2:1.** ປຽບທຽບໃສ່ກັບ 1 ໂຢຮັນ 2:1

ພຣະຄຣິດເປັນຜູ້ວິງວອນແທນພວກເຮົານຳພຣະບິດາ ຖ້າພວກເຮົາກັບໃຈ.

1 ລູກນ້ອຍໆທັງຫລາຍຂອງເຮົາເອີຍ, ເຮົາຂຽນຂໍ້ຄວາມເຫລົ່ານີ້ມາເຖິງພວກເຈົ້າ ເພື່ອ

ພວກເຈົ້າຈະບໍ່ເຮັດບາບ. *ແຕ່*ຖ້າຄົນໃດເຮັດບາບ *ແລະ ກັບ ໃຈ,* ພວກເຮົາມີຜູ້ວິງວອນແທນພວກເຮົາ ນຳ ພຣະບິດາ, ນັ້ນ ຄືພຣະເຢຊູຄຣິດຜູ້ຊອບທຳ;

**ປຈສ, 1 ໂຢຮັນ 3:9.** ປຽບທຽບໃສ່ກັບ 1 ໂຢຮັນ 3:9

ຜູ້ໃດທີ່ເກີດຈາກພຣະເຈົ້າ ຈະບໍ່ຢູ່ໃນບາບອີກຕໍ່ໄປ.

9 ຜູ້ໃດກໍຕາມທີ່ເກີດຈາກພຣະເຈົ້າ ຈະ*ບໍ່ເຮັດບາບອີກຕໍ່ໄປ;* ເພາະ*ພຣະວິນຍານຂອງພຣະເຈົ້າ* ດຳລົງຢູ່ໃນຜູ້ນັ້ນ; ແລະ ເຂົາກໍບໍ່ອາດຢູ່ໃນບາບ*ອີກຕໍ່ໄປ;* ເພາະເຂົາໄດ້ເກີດໃໝ່ຈາກພຣະເຈົ້າ, *ໂດຍໄດ້ຮັບພຣະວິນຍານສັກສິດແຫ່ງຄຳສັນຍານັ້ນ.*

**ປຈສ, 1 ໂຢຮັນ 4:12.** ປຽບທຽບໃສ່ກັບ 1 ໂຢຮັນ 4:12

ພຽງແຕ່ຄົນທີ່ເຊື່ອໃນພຣະເຈົ້າເທົ່ານັ້ນ ທີ່ສາມາດເຫັນພຣະອົງ.

12 ບໍ່ມີມະນຸດຄົນໃດທີ່ເຄີຍໄດ້ເຫັນພຣະເຈົ້າ ບໍ່ວ່າໃນເວລາໃດກໍຕາມ, *ຍົກເວັ້ນແຕ່ຄົນທີ່ເຊື່ອເທົ່ານັ້ນ.* ຖ້າຫາກພວກເຮົາຮັກຊຶ່ງກັນແລະກັນ, ພຣະເຈົ້າຈະສະຖິດຢູ່ໃນພວກເຮົາ, ແລະ ຄວາມຮັກຂອງພຣະອົງຈະສົມບູນໃນເຮົາ.

**ປຈສ, ພຣະນິມິດ 1:1–8.** ປຽບທຽບໃສ່ກັບ ພຣະນິມິດ 1:1–8

ອັກຄະສາວົກໂຢຮັນໄດ້ຮັບການທຳນາຍໃນໜັງສືພຣະນິມິດ. ພຣະເຢຊູຄຣິດ ແລະ ທູດອົງໜຶ່ງ ໄດ້ມາຢ້ຽມຢາມເພິ່ນ.

1 ພຣະນິມິດຂອງ*ໂຢຮັນ, ຜູ້ຮັບ ໃຊ້ຂອງພຣະເຈົ້າ, ຊຶ່ງພຣະເຢຊູຄຣິດໄດ້ປະທານ*ໃຫ້ແກ່ເພິ່ນ, ເພື່ອສະແດງໃຫ້ບັນດາຜູ້ຮັບໃຊ້ຂອງພຣະອົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນໃນບໍ່ຊ້ານັ້ນ, *ຊຶ່ງ*ພຣະອົງໄດ້ສົ່ງທູດຂອງພຣະອົງໄປສະແດງໝາຍສຳຄັນແກ່ໂຢຮັນ,

2 ຜູ້ *ໄດ້ເປັນ ພະຍານ*ເຖິງພຣະຄຳຂອງພຣະເຈົ້າ, ແລະ ກ່ຽວກັບປະຈັກພະຍານເຖິງພຣະເຢຊູຄຣິດ, ແລະ ກ່ຽວກັບທຸກສິ່ງທັງປວງທີ່ເພິ່ນໄດ້ເຫັນ.

3 *ຜູ້ທີ່*ໄດ້ອ່ານກໍເປັນສຸກແລ້ວ, ແລະ ຜູ້ທີ່ໄດ້ຍິນ *ແລະ ເຂົ້າໃຈ*ຖ້ອຍຄຳແຫ່ງຄຳທຳນາຍນີ້, ແລະ ປະຕິບັດຕາມຂໍ້ຄວາມທີ່ມີຂຽນໄວ້, ເພາະເວລາ*ແຫ່ງການສະເດັດມາຂອງພຣະຜູ້ເປັນເຈົ້າ ກໍໃກ້ເຂົ້າມາແລ້ວ.*

4 *ບັດ ນີ້ ນີ້ແມ່ນ ປະ ຈັກ ພະຍານ ຂອງ*ໂຢຮັນຕໍ່*ຜູ້ຮັບໃຊ້ເຈັດຄົນ ທີ່ດູແລ*ສາດສະໜາຈັກທັງເຈັດຢູ່ໃນແຂວງເອເຊຍ. ຂໍໃຫ້ພຣະຄຸນມາສູ່ທ່ານ, ແລະ ສັນຕິສຸກຈາກພຣະອົງຜູ້ດຳລົງຢູ່, ແລະ ຜູ້ດຳລົງຢູ່ມາແລ້ວ, ແລະ ຜູ້ຈະສະເດັດມາ; *ຜູ້ໄດ້ສົ່ງທູດຂອງພຣະອົງມາຈາກ*ພຣະທີ່ນັ່ງຂອງພຣະອົງ, *ເພື່ອເປັນພະຍານແກ່ຜູ້ຮັບໃຊ້ເຈັດຄົນເຫລົ່ານັ້ນ ທີ່ດູແລສາດສະໜາຈັກທັງເຈັດ.*

5 *ສະນັ້ນ, ເຮົາ, ໂຢຮັນ, ພະຍານທີ່ຊື່ສັດ, ຈຶ່ງເປັນພະຍານເຖິງສິ່ງທີ່ໄດ້ທູດໄດ້ນຳມາໃຫ້ເຮົາ,* ແລະ ຈາກພຣະເຢຊູຄຣິດ ຊຶ່ງເປັນຜູ້ທຳອິດທີ່ໄດ້ເປັນຄືນມາຈາກຕາຍ, ກັບທັງ*ຄອບຄອງ*ກະສັດທັງຫລາຍໃນໂລກ.

6 *ແລະ* ຕໍ່ພຣະອົງທີ່ຮັກເຮົາ, *ພຣະກຽດ*ຈົ່ງມີແດ່ພຣະອົງ; ຜູ້ໄດ້ຊຳລະລ້າງເຮົາຈາກການຜິດບາບ ດ້ວຍໂລຫິດຂອງພຣະອົງເອງ, ແລະ ໄດ້ຕັ້ງເຮົາທັງຫລາຍ ໄວ້ໃຫ້ເປັນອານາຈັກ ແລະ ເປັນປະໂລຫິດຂອງພຣະເຈົ້າ, ພຣະບິດາຂອງພຣະອົງ. ພຣະກຽດ ແລະ ລິດທານຸພາບ ຈົ່ງມີແດ່ພຣະອົງສືບໆໄປເປັນນິດ. ອາແມນ.

7 *ເພາະ*ຈົ່ງ ເບິ່ງ, ພຣະອົງຈະສະເດັດມາໃນກ້ອນເມກ *ພ້ອມດ້ວຍໄພ່ພົນຂອງພຣະອົງ ຫລາຍໜຶ່ງໝື່ນຄົນ ທີ່ຢູ່ໃນອານາຈັກ, ຮຸ່ງເຫລື້ອມດ້ວຍລັດສະໝີພາບຂອງພຣະບິດາຂອງພຣະອົງ.* ແລະ ຕາທຸກ

ໜ່ວຍຈະເຫັນພຣະອົງ; ແລະ ຄົນເຫລົ່ານັ້ນ
ທີ່ໄດ້ແທງພຣະອົງ, ແລະ ມະນຸດທຸກຊາດ
ທົ່ວໂລກຈະຮ້ອງໄຫ້ຮ່ຳໄຮເພາະພຣະອົງ.
ຈະເປັນໄປຢ່າງນັ້ນ, ອາແມນ.
8 *ເພາະ ພຣະອົງ ໄດ້ກ່າວວ່າ,* ເຮົາຄື
ອາລະຟາ ແລະ ໂອເມຄາ, ເປັນຕົ້ນ ແລະ
ທີ່ສຸດ, ເປັນພຣະຜູ້ເປັນເຈົ້າ, *ຜູ້*ດຳລົງຢູ່ໃນ
ປະຈຸບັນ, ແລະ *ຜູ້*ດຳລົງຢູ່ໃນອະດີດ, ແລະ
*ຜູ້*ຈະສະເດັດມາໃນອະນາຄົດ, ຜູ້ຊົງລິດທາ
ນຸພາບສູງສຸດ.

**ປຈສ, ພຣະນິມິດ 2:22.** ປຽບທຽບໃສ່
ກັບ ພຣະນິມິດ 2:22

ຄົນຊົ່ວຈະຖືກໂຍນລົງນະລົກ.

22 ຈົ່ງເບິ່ງ, ເຮົາຈະໂຍນນາງລົງ*ນະລົກ,*
ແລະ ພວກທີ່ຫລິ້ນຊູ້ກັບນາງ ຈະໄດ້ຮັບ
ຄວາມທຸກທໍລະມານອັນແສນສາຫັດ, ຍົກ
ເວັ້ນແຕ່ພວກເຂົາຈະກັບໃຈຈາກການກະ
ທຳຂອງພວກເຂົາ.

**ປຈສ, ພຣະນິມິດ 2:26–27.** ປຽບທຽບ
ໃສ່ກັບ ພຣະນິມິດ 2:26–27

ຜູ້ທີ່ເອົາຊະນະໂລກໄດ້ ໂດຍການເຊື່ອຟັງຕໍ່ພຣະບັນ
ຍັດຂອງພຣະຄຣິດ ຈະໄດ້ປົກຄອງອານາຈັກຢູ່ໃນ
ໂລກທີ່ຈະມາເຖິງ ດ້ວຍສັດທາ, ຄວາມສະເໝີພາບ,
ແລະ ຄວາມຊອບທຳ.

26 ແລະ *ຜູ້ ທີ່*ເອົາ ຊະນະ, ແລະ ຮັກ
ສາ*ພຣະບັນຍັດ*ຂອງເຮົາ ຈົນເຖິງທີ່ສຸດ,
ເຮົາຈະໃຫ້ຜູ້ນັ້ນມີອຳນາດປົກຄອງ*ຫລາຍ
ອານາຈັກ;*
27 ແລະ ຜູ້ນັ້ນຈະປົກຄອງ ພວກເຂົາ
ດ້ວຍ *ພຣະຄຳຂອງພຣະເຈົ້າ; ແລະ ພວກ
ເຂົາຈະຢູ່ໃນກຳມືຂອງຜູ້ນັ້ນ* ເໝືອນດັ່ງ
*ໝໍ້ດິນ ຢູ່ໃນມືຂອງຊ່າງປັ້ນໝໍ້; ແລະ ຜູ້ນັ້ນ
ຈະປົກຄອງພວກເຂົາດ້ວຍສັດທາ, ດ້ວຍ
ຄວາມສະເໝີພາບ, ແລະ ດ້ວຍຄວາມ
ຊອບທຳ,* ຕາມທີ່ເຮົານີ້ໄດ້ຮັບອຳນາດຈາກ
ພຣະບິດາຂອງເຮົາ.

**ປຈສ, ພຣະນິມິດ 5:6.** ປຽບທຽບໃສ່ກັບ
ພຣະນິມິດ 5:6

ຜູ້ຮັບໃຊ້ສິບສອງຄົນຂອງພຣະເຈົ້າໄດ້ຖືກສົ່ງອອກ
ໄປທົ່ວໂລກ.

6 ແລະ ຂ້າພະເຈົ້າໄດ້ເຫັນ, ແລະ ເບິ່ງ
ແມ, ໃນທ່າມກາງພຣະບັນລັງ ແລະ ສັດທັງ
ສີ່, ແລະ ໃນທ່າມກາງບັນດາພວກອາວຸໂສ,
ພຣະເມສານ້ອຍເບິ່ງຄືວ່າໄດ້ຖືກຂ້າ, ໂດຍ
ທີ່ມີເຂົາ*ສິບສອງ*ອັນ ແລະ *ມີຕາສິບສອງ
ໜ່ວຍ,* ຊຶ່ງເປັນ*ຜູ້ຮັບໃຊ້ສິບສອງຄົນ*ຂອງ
ພຣະເຈົ້າ, ໄດ້ຖືກສົ່ງອອກໄປທົ່ວໂລກ.

**ປຈສ, ພຣະນິມິດ 12:1–17.** ປຽບທຽບ
ໃສ່ກັບ ພຣະນິມິດ 12:1–17

ໂຢຮັນອະທິບາຍເຄື່ອງໝາຍກ່ຽວກັບແມ່ຍິງ, ເດັກ
ນ້ອຍ, ຄ້ອນເຫລັກ, ພະຍານາກ, ແລະ ມີຄາເອນ.
ສົງຄາມທີ່ໄດ້ເລີ່ມຕົ້ນຢູ່ສະຫວັນ ຍັງດຳເນີນຕໍ່ໄປຢູ່
ເທິງແຜ່ນດິນໂລກ. ໃຫ້ສັງເກດເບິ່ງການປ່ຽນລຳດັບ
ຂໍ້ພຣະຄຳພີ ໃນ ປຈສ.

1 ແລະ ມີເຄື່ອງ*ໝາຍ ສຳຄັນ*ອັນ ໃຫຍ່
ປະກົດຂຶ້ນໃນສະຫວັນ, *ໃນຄວາມເປັນ
ເໝືອນດັ່ງສິ່ງທັງຫລາຍຢູ່ເທິງແຜ່ນດິນ
ໂລກ;* ຄືຍິງຜູ້ໜຶ່ງມີດວງອາທິດປົກຄຸມຕົວ
ເໝືອນນຸ່ງເສື້ອຜ້າ, ແລະ ມີດວງເດືອນຢູ່
ໃຕ້ຕີນ, ແລະ ຢູ່ເທິງຫົວຂອງນາງ ມີມົງກຸດ
ພ້ອມດ້ວຍດາວສິບສອງດວງ.
2 ແລະ *ຍິງ*ຜູ້ນັ້ນຖືພາ, ຮ້ອງຄາງ, ເພາະ
ເຈັບທ້ອງ, ແລະ ເຈັບປວດຢູ່ ກຳລັງຈະເກີດ
ລູກ.
3 *ແລະ ນາງໄດ້ຄອດລູກເປັນຜູ້ຊາຍ, ຜູ້
ຈະຕ້ອງປົກຄອງປະຊາຊາດທັງປວງດ້ວຍ
ຄ້ອນເຫລັກ; ແລະ ລູກຂອງນາງໄດ້ຖືກຍົກ
ຂຶ້ນເມືອເຖິງພຣະເຈົ້າ ແລະ ເຖິງພຣະທີ່ນັ່ງ
ຂອງພຣະອົງ.*
4 ແລະ ມີເຄື່ອງ*ໝາຍສຳຄັນ*ອີກຢ່າງໜຶ່ງ

ປະກົດ ຂຶ້ນ ໃນ ສະຫວັນ; ແລະ ຈົ່ງ ເບິ່ງ, ມີ
ພະຍານາກໃຫຍ່ສີແດງໂຕໜຶ່ງ, ມີເຈັດຫົວ
ແລະ ສິບເຂົາ, ແລະ ມີມົງກຸດ ເຈັດອັນ ຢູ່
ເທິງຫົວ ຂອງມັນ. ແລະ ຫາງ ຂອງ ພະຍາ
ນາກໄດ້ຟາດດວງດາວໜຶ່ງສ່ວນສາມຈາກ
ຟ້າສະຫວັນ ລົງ ໃສ່ ແຜ່ນ ດິນ ໂລກ. ແລະ
ພະຍານາກໄດ້ຢືນຢູ່ຕໍ່ໜ້ານາງຜູ້ກຳລັງຈະ
ຄອດລູກ, *ຕຽມພ້ອມ*ທີ່ຈະກິນລູກຂອງນາງ
*ເມື່ອ*ເກີດແລ້ວ.
5 ແລະ ຍິງຄົນນັ້ນໄດ້ປົບໜີເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານ, ໄປຫາບ່ອນທີ່ພຣະ
ເຈົ້າ *ໄດ້*ຕຽມໄວ້ສຳລັບນາງ, ເພື່ອວ່າເຂົາ
ເຈົ້າ ຈະ ໄດ້ ຮັບການ ລ້ຽງ ດູ ຢູ່ ທີ່ນັ້ນ ເປັນ
ເວລາໜຶ່ງພັນສອງຮ້ອຍຫົກສິບ*ປີ.*
6 ແລະ ມີສົງຄາມໃນສະຫວັນ; ມີຄາເອນ
ແລະ ເຫລົ່າທູດຂອງລາວໄດ້ຕໍ່ສູ້ກັບພະຍາ
ນາກ; ແລະ ພະຍານາກ ແລະ ບໍລິວານ
ຂອງມັນ *ໄດ້ຕໍ່ສູ້ກັບມີຄາເອນ;*
7 ແລະ *ພະຍານາກ*ບໍ່ສາມາດເອົາຊະ
ນະ*ມີຄາເອນ, ຫລື ເດັກນ້ອຍ, ຫລື ແມ່ຍິງ*
*ຊຶ່ງເປັນສາດສະໜາຈັກຂອງພຣະເຈົ້າ, ຜູ້*
*ໄດ້ຖືກປົດປ່ອຍຈາກຄວາມເຈັບປວດຂອງ*
*ນາງ, ແລະ ໄດ້ຖືກພາມາຫາອານາຈັກຂອງ*
*ພຣະເຈົ້າຂອງພວກເຮົາ ແລະ ຂອງພຣະ*
*ຄຣິດຂອງພຣະອົງ.*
8 ທັງ ບໍ່ ມີ*ບ່ອນ*ຢູ່ ໃນ ສະຫວັນ*ສຳລັບ*ພະ
ຍານາກໃຫຍ່, *ຜູ້*ຖືກຂັດຖິ້ມລົງເສຍ; ງູແຕ່
ດຶກດຳບັນທີ່ຖືກເອີ້ນວ່າ ມານຮ້າຍ, ແລະ
ຖືກ*ເອີ້ນອີກວ່າ* ຊາຕານ, ຊຶ່ງຫລອກລວງ
ມະນຸດທັງ ໂລກ; ມັນຖືກຂັດລົງ ເທິງແຜ່ນ
ດິນ ໂລກ; ແລະ ບໍລິວານຂອງມັນກໍຖືກຂັດ
ລົງຖິ້ມໄປພ້ອມກັບມັນ.
9 ແລະ ຂ້າພະເຈົ້າໄດ້ຍິນສຽງດັງມາຈາກ
ສະຫວັນວ່າ ບັດນີ້ ຄວາມລອດ, ແລະ ພະ
ລັງ, ແລະ ອານາຈັກຂອງພຣະເຈົ້າຂອງ
ພວກເຮົາ, ແລະ ອຳນາດຂອງພຣະຄຣິດ
ຂອງພຣະອົງ ໄດ້ມາເຖິງແລ້ວ;
10 ເພາະ ວ່າ ຜູ້ທີ່ກ່າວ ໂທດພີ່ນ້ອງຂອງ
ພວກເຮົາ ໄດ້ຖືກຂັດຖິ້ມລົງແລ້ວ, ຊຶ່ງໄດ້
ກ່າວ ໂທດພວກເຂົາ ຕໍ່ພຣະພັກຂອງພຣະ
ເຈົ້າ ທັງກາງເວັນ ແລະ ກາງຄືນ.
11 *ເພາະພວກເຂົາໄດ້ເອົາຊະນະ*ພະຍາ
ນາກແລ້ວ ໂດຍ ໂລຫິດຂອງພຣະເມສາ
ນ້ອຍ, ແລະ ໂດຍຖ້ອຍຄຳຂອງ ປະຈັກ
ພະຍານຂອງພວກເຂົາ; *ເພາະພວກເຂົາ*
ບໍ່ເສຍດາຍຊີວິດຂອງຕົນເອງ, *ແຕ່ໄດ້ຮັກ*
*ສາປະຈັກພະຍານ* ແມ່ນແຕ່ເຖິງແກ່ຄວາມ
ຕາຍ. ສະນັ້ນ, ຈົ່ງປິຕິຍິນດີເຖີດ ສະຫວັນ,
ແລະ ພວກທ່ານຜູ້ທີ່ອາໄສຢູ່ໃນນັ້ນ.
12 *ແລະ ຫລັງ ຈາກສິ່ງເຫລົ່ານີ້ ຂ້າພະ*
*ເຈົ້າໄດ້ຍິນອີກສຽງໜຶ່ງກ່າວວ່າ* ວິບັດແກ່ຜູ້
ອາໄສຢູ່ເທິງແຜ່ນດິນ ໂລກ, *ແທ້ຈິງແລ້ວ,*
ແລະ *ພວກເຂົາຜູ້ທີ່ອາໄສຢູ່ຕາມເກາະ*ໃນ
ທະເລ! ເພາະມານຮ້າຍກຳລັງລົງມາຫາ
ພວກເຈົ້າ, ດ້ວຍຄວາມຄຽດແຄ້ນອັນໃຫຍ່,
ເພາະມັນຮູ້ວ່າ ເວລາຂອງມັນມີໜ້ອຍ.
13 *ເພາະເມື່ອ* ພະຍານາກໄດ້ເຫັນວ່າ
ມັນໄດ້ຖືກຂັດຖິ້ມລົງມາຍັງແຜ່ນດິນ ໂລກ,
ມັນໄດ້ເລີ່ມຂົ່ມເຫັງຍິງທີ່ໄດ້ເກີດລູກຊາຍ
ນັ້ນ.
14 *ສະນັ້ນ,* ຍິງຜູ້ນັ້ນຈຶ່ງໄດ້ຮັບປີກສອງ
ອັນ ຂອງນົກອິນຊີໃຫຍ່, ເພື່ອວ່ານາງຈະ
ໄດ້*ບິນໜີ*ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ,
ໄປຫາບ່ອນຂອງນາງ, ບ່ອນທີ່ນາງໄດ້ຮັບ
ການລ້ຽງດູຢູ່ຊົ່ວໄລຍະໜຶ່ງ, ແລະ ຫລາຍ
ໄລຍະ, ແລະ ຕື່ມອີກເຄິ່ງໄລຍະໜຶ່ງ, ຈາກ
ການໂຈມຕີຂອງງູ.
15 ແລະ ພະຍານາກນັ້ນໄດ້ພົ່ນນ້ຳອອກ
ມາຈາກປາກເໝືອນແມ່ນ້ຳ ໄຫລຕາມຍິງ
ນັ້ນ, ເພື່ອມັນຈະເຮັດໃຫ້ນາງຖືກກະແສນ້ຳ
ພັດໄປ.
16 ແລະ ແຜ່ນ ດິນ *ໄດ້ ຊ່ວຍ ເຫລືອ*ນາງ,

ແລະ ແຜ່ນດິນ *ໄດ້ເປີດ*ປາກຂອງມັນ, ແລະ *ກືນກິນ*ນ້ຳ ທີ່ພະຍານາກ *ໄດ້ພົ່ນ*ອອກມາ ຈາກປາກຂອງມັນ.

17 *ສະນັ້ນ,* ພະຍານາກກໍຄຽດແຄ້ນຢ່າງ ໃຫຍ່ໃຫ້ຍິງນັ້ນ, ແລະ ໄດ້ອອກໄປຕໍ່ສູ້ກັບຜູ້ ທີ່ເຫລືອຢູ່ຂອງເຊື້ອສາຍຂອງນາງ, ຄືຄົນທີ່ ຮັກສາພຣະບັນຍັດຂອງພຣະເຈົ້າ, ແລະ ມີ ປະຈັກພະຍານເຖິງພຣະເຢຊູຄຣິດ.

**ປຈສ, ພຣະນິມິດ 19:15, 21.** ປຽບທຽບ ໃສ່ກັບ ພຣະນິມິດ 19:15, 21

ພຣະເຈົ້າໃຊ້ພຣະຄຳຂອງພຣະຄຣິດ ເພື່ອລົງທັນປະ ຊາຊາດທັງປວງ.

15 ແລະ ມີພຣະຄຳຂອງພຣະເຈົ້າ*ອອກ ມາຈາກພຣະໂອດຂອງພຣະອົງ,* ແລະ ດ້ວຍພຣະຄຳນີ້ ພຣະອົງຈະລົງທັນປະຊາ ຊາດທັງປວງ; ແລະ ພຣະອົງຈະປົກຄອງ ພວກເຂົາດ້ວຍ*ພຣະຄຳຈາກພຣະໂອດ ຂອງພຣະອົງເອງ;* ແລະ ພຣະອົງຈະຢຽບ ເຄື່ອງປັ່ນໝາກອະງຸ່ນ*ໃນ*ຄວາມຮ້າຍກາດ ແລະ ພຣະພິໂລດຂອງພຣະເຈົ້າຜູ້ຊົງລິດ ອຳນາດຍິ່ງໃຫຍ່.

21 ແລະ ສ່ວນທີ່ເຫລືອຢູ່ນັ້ນ ກໍຖືກຂ້າ ດ້ວຍ*ພຣະຄຳ*ຂອງພຣະອົງ ຜູ້ນັ່ງຢູ່ເທິງ ຫລັງມ້າ, ຊຶ່ງ*ພຣະຄຳ*ໄດ້ອອກມາຈາກພຣະ ໂອດຂອງພຣະອົງ; ແລະ ຝູງນົກທັງຫລາຍ ກໍໄດ້ກິນຊີ້ນຂອງຄົນເຫລົ່ານັ້ນຈົນອີ່ມ.

# ແຜນທີ່ຂອງສະໄໝພຣະຄຣິສຕະທຳຄຳພີ

ແຜນທີ່ຕໍ່ໄປນີ້ ສາມາດຊ່ວຍທ່ານໃຫ້ເຂົ້າໃຈພຣະຄຳພີຫລາຍຂຶ້ນ. ການຮູ້ຈັກພູມີສາດຂອງປະເທດທີ່ອະທິບາຍໄວ້ຢູ່ໃນພຣະຄຳພີ, ທ່ານຈະເຂົ້າໃຈຫລາຍຂຶ້ນກ່ຽວກັບເຫດການໃນພຣະຄຳພີ.

## ສະຫລຸບ ແລະ ເຄື່ອງໝາຍໃຊ້ແທນ

ເສັ້ນຂີດອ້ອມຢູ່ໃນແຜນທີ່ຂ້າງລຸ່ມນີ້ ບົ່ງບອກເຖິງບໍລິເວນຂອງແຜນທີ່ແຕ່ລະໃບທີ່ໝາຍເລກໄວ້. ແຜນທີ່ເຫລົ່ານີ້ປະກອບດ້ວຍພາກພື້ນອັນກວ້າງໃຫຍ່ ລວມທັງບໍລິເວນພື້ນທີ່ທາງພູມີສາດ ຊຶ່ງເປັນບໍລິເວນຈຳກັດທີ່ນ້ອຍໆ.

1. ຮູບຮ່າງແຜນທີ່ຂອງແຜ່ນດິນສັກສິດ
2. ການອົບພະຍົບຂອງຊາວອິດສະຣາເອນຈາກເອຢິບ ແລະ ເຂົ້າໄປໃນການາອານ
3. ການແບ່ງແຍກຂອງ 12 ເຜົ່າ
4. ຈັກກະພັບຂອງດາວິດ ແລະ ໂຊໂລໂມນ
5. ຈັກກະພັບອັດຊີເຣຍ
6. ຈັກກະພັບບາບີໂລນໃໝ່ ແລະ ອານາຈັກເອຢິບ
7. ຈັກກະພັບເປີເຊຍ
8. ຈັກກະພັບໂຣມ
9. ໂລກຂອງສະໄໝພຣະຄຳພີເດີມ
10. ການາອານໃນສະໄໝຂອງພຣະຄຳພີເດີມ
11. ແຜ່ນດິນສັກສິດໃນສະໄໝຂອງພຣະຄຳພີໃໝ່
12. ເຢຣູຊາເລັມໃນສະໄໝຂອງພຣະເຢຊູ
13. ການເດີນທາງໄປເຜີຍແຜ່ຂອງອັກຄະສາວົກໂປໂລ
14. ຄວາມສູງຂອງແຜ່ນດິນສັກສິດ




ຕໍ່ໄປນີ້ແມ່ນເຄື່ອງໝາຍໃຊ້ແທນ ເພື່ອຈະໄດ້ເຂົ້າໃຈເຄື່ອງໝາຍທີ່ແຕກຕ່າງກັນ ແລະ ຂະໜາດຂອງຕົວພິມທີ່ໃຊ້ໃນແຜນທີ່. ນອກເໜືອຈາກນີ້, ແຜນທີ່ແຕ່ລະໃບ ຍັງມີເຄື່ອງໝາຍໃຊ້ແທນພ້ອມດ້ວຍຄຳອະທິບາຍຂອງເຄື່ອງໝາຍເພີ່ມເຕີມ ທີ່ກ່ຽວກັບແຜນທີ່ນັ້ນໂດຍສະເພາະ.

| | |
|---|---|
| ● | ຈຸດສີແດງ ໝາຍເຖິງ ເມືອງ ຫລື ໝູ່ບ້ານ. |
| ▲ | ຮູບສາມຫລ່ຽມນ້ອຍສີດຳ ໝາຍເຖິງ ພູເຂົາ. |
| *ທະເລຕາຍ* | ຂະໜາດຂອງຕົວພິມນີ້ ຖືກໃຊ້ສຳລັບພູມີພາກ ດັ່ງເຊັ່ນ ທະເລ, ແມ່ນ້ຳ, ພູຜາ, ທະເລຊາຍ, ແລະ ເກາະຕ່າງໆ. |
| ເຢຣູຊາເລັມ | ຂະໜາດຂອງຕົວພິມນີ້ ຖືກໃຊ້ສຳລັບເມືອງ ແລະ ໝູ່ບ້ານ (ແລະ ສຳລັບສະຖານທີ່ປີກຫຍ່ອຍ ຢູ່ໃນແຜນທີ່ຂອງເມືອງເຢຣູຊາເລັມ). |
| **ໂມອາບ** | ຂະໜາດຂອງຕົວພິມນີ້ ຖືກໃຊ້ສຳລັບການແບ່ງແຍກທາງການເມືອງທີ່ນ້ອຍກວ່າ ດັ່ງເຊັ່ນພາກພື້ນ, ຜູ້ຄົນ, ແລະ ເຜົ່າຕ່າງໆ. |
| **ຢູດາຍ** | ຮູບຮ່າງຂອງຕົວພິມນີ້ ຖືກໃຊ້ສຳລັບການແບ່ງແຍກທາງການເມືອງທີ່ໃຫຍ່ກວ່າ ດັ່ງເຊັ່ນ ຈັກກະພັບ ແລະ ປະຊາຊາດ. |

## 1. ຮູບຮ່າງແຜນທີ່ຂອງແຜ່ນດິນສັກສິດ



## 2. ການອົບພະຍົບຂອງຊາວອິດສະຣາເອນຈາກເອຢິບ ແລະ ເຂົ້າໄປໃນການາອານ




1. **ຣາມາເຊັດ** ຊາວອິດສະຣາເອນຖືກຂັບໄລ່ອອກຈາກເອຢິບ (ອພຍ 12; ຈບຊ 33:5).
2. **ຊຸກໂກດ** ຫລັງຈາກຊາວເຮັບເຣີໄດ້ໜີຈາກຄ້າຍພັກທຳອິດນີ້ແລ້ວ, ພຣະຜູ້ເປັນເຈົ້າໄດ້ຊີ້ທາງພວກເຂົາໄປດ້ວຍເສົາເມກໃນເວລາກາງເວັນ ແລະ ດ້ວຍເສົາໄຟໃນເວລາກາງຄືນ (ອພຍ 13:20–22).
3. **ປີຮາຮີໂຣດ** ຊາວອິດສະຣາເອນໄດ້ເດີນຂ້າມທະເລແດງ (ອພຍ 14; ຈບຊ 33:8).
4. **ມາຣາ** ພຣະຜູ້ເປັນເຈົ້າໄດ້ປິ່ນແປງນ້ຳທີ່ມາຣາ (ອພຍ 15:23–26).
5. **ເອລີມ** ຊາວອິດສະຣາເອນໄດ້ຕັ້ງຄ້າຍພັກຢູ່ໃກ້ບໍ່ນ້ຳ 12 ແຫ່ງ (ອພຍ 15:27).
6. **ຖິ່ນແຫ້ງແລ້ງກັນດານຊິນ** ພຣະຜູ້ເປັນເຈົ້າໄດ້ສົ່ງມານາ ແລະ ນົກຂຸ້ມ ມາລ້ຽງດູຊາວອິດສະຣາເອນ (ອພຍ 16).
7. **ເຣຟີດີມ** ຊາວອິດສະຣາເອນໄດ້ເຮັດເສິກກັບຊາວອາມາເຫລັກ (ອພຍ 17:8–16).
8. **ພູຊີນາຍ (ພູໂຮເຣັບ ຫລື ເຈເບນ ມູສາ)** ພຣະຜູ້ເປັນເຈົ້າໄດ້ເປີດເຜີຍພຣະບັນຍັດສິບປະການ (ອພຍ 19–20).
9. **ຖິ່ນແຫ້ງແລ້ງກັນດານຊີນາຍ** ຊາວອິດສະຣາເອນໄດ້ສ້າງສະຖານທີ່ນະມັດສະການ (ອພຍ 25–30).
10. **ຄ້າຍພັກໃນຖິ່ນແຫ້ງແລ້ງກັນດານ** ພວກແອວເດີເຈັດສິບຄົນໄດ້ຖືກເອີ້ນໃຫ້ຊ່ວຍເຫລືອໂມເຊປົກຄອງປະຊາຊົນ (ຈບຊ 11:16–17).
11. **ເອຊີໂອນເກເບ** ຊາວອິດສະຣາເອນໄດ້ເດີນຜ່ານແຜ່ນດິນເອຊາວ ແລະ ອຳໂມນ ໄປຢ່າງສັນຕິ (ພບຍ 2).
12. **ກາເດັດ-ບາກເນອາ** ໂມເຊໄດ້ສົ່ງນັກສືບໄປຫາແຜ່ນດິນແຫ່ງຄຳສັນຍາ; ຊາວອິດສະຣາເອນໄດ້ກະບົດ ແລະ ບໍ່ສາມາດເຂົ້າໄປໃນ; ກາເດັດໄດ້ເປັນຄ້າຍພັກໃຫຍ່ຂອງຊາວອິດສະຣາເອນ ເປັນເວລາຫລາຍປີ (ຈບຊ 13:1–3, 17–33; 14; 32:8; ພບຍ 2:14).
13. **ຖິ່ນແຫ້ງແລ້ງກັນດານພາກຕາເວັນອອກ** ຊາວອິດສະຣາເອນໄດ້ຫລີກເວັ້ນຈາກການຕໍ່ສູ້ກັບຊາວເອໂດມ ແລະ ຊາວໂມອາບ (ຈບຊ 20:14–21; 22–24).
14. **ແມ່ນ້ຳອາກໂນນ** ຊາວອິດສະຣາເອນໄດ້ທຳລາຍຊາວອາໂມ ຜູ້ໄດ້ຕໍ່ສູ້ກັບພວກເຂົາ (ພບຍ 2:24–37).
15. **ພູເນໂບ** ໂມເຊໄດ້ຫລຽວເບິ່ງແຜ່ນດິນແຫ່ງຄຳສັນຍາ (ພບຍ 34:1–4). ໂມເຊໄດ້ກ່າວເທດສະໜາສາມເທື່ອສຸດທ້າຍຂອງເພິ່ນ (ພບຍ 1–32).
16. **ທົ່ງພຽງໂມອາບ** ພຣະຜູ້ເປັນເຈົ້າໄດ້ບອກຊາວອິດສະຣາເອນໃຫ້ແບ່ງປັນດິນແດນ ແລະ ຂັບໄລ່ຜູ້ອາໄສຢູ່ໃນນັ້ນອອກໄປ (ຈບຊ 33:50–56).
17. **ແມ່ນ້ຳຈໍແດນ** ຊາວອິດສະຣາເອນໄດ້ຂ້າມແມ່ນ້ຳຈໍດອນໄປເຖິງແຜ່ນດິນແຫ້ງ. ໃກ້ກິນການ, ກ້ອນຫີນຈາກພື້ນແມ່ນ້ຳຈໍແດນໄດ້ຖືກຕັ້ງໄວ້ເປັນອະນຸສອນ ເຖິງການແຍກແມ່ນ້ຳຈໍແດນອອກເປັນສອງ (ຢຊ 3:1–5:1).
18. **ເຢຣິໂກ** ລູກຫລານຂອງອິດສະຣາເອນໄດ້ຍຶດຄອງ ແລະ ໄດ້ທຳລາຍເມືອງ (ຢຊ 6).

## 3. ການແບ່ງແຍກຂອງ 12 ເຜົ່າ



## 4. ຈັກກະພັບຂອງດາວິດ ແລະ ໂຊໂລໂມນ



## 5. ຈັກກະພົບອັດຊີເຣຍ




## 6. ຈັກກະພົບບາບີໂລນໃໝ່ ແລະ ອານາຈັກເອຢິບ



## 7. ຈັກກະພັບເປີເຊຍ




## 8. ຈັກກະພັບໂຣມ



## 9. ໂລກຂອງສະໄໝພຣະຄຳພີເດີມ



1. **ພູ ອາຣາຣັດ** ຕາມ ທີ່ ບອກ ເລົ່າ ກັນ ມາ ເປັນ ບ່ອນ ທີ່ ເຮືອ ຂອງ ໂນອາມາຈອດຢູ່ (ປຖກ 8:4). ບໍ່ຮູ້ຈັກສະຖານທີ່ແນ່ນອນ.

2. **ອູເຣ** ບ້ານເກີດຂອງອັບຣາຮາມ, ໃກ້ພູເອີຟຣັດ, ບ່ອນທີ່ເພິ່ນເກືອບຖືກຂ້າ ເປັນ ເຄື່ອງເຜົາຖວາຍ, ໄດ້ເຫັນທູດຂອງພຣະເຢໂຮວາ, ແລະ ໄດ້ຮັບອຸລິມ ແລະ ທຸມມີມ (ປຖກ 11:28–12:1; ອຣຮ 1; 3:1). (ອາດເປັນສະຖານທີ່ສຳລອງສຳລັບອູເຣ ໃນພາກເໜືອຂອງເມໂຊໂປຕາເມຍ.)

3. **ບາບີໂລນ, ບາເບນ (ຊີນາ)** ບ່ອນທີ່ກູເຊ, ລູກຊາຍຂອງຮາມ, ໄດ້ມາຕັ້ງຖິ່ນຖານກ່ອນໝູ່, ແລະ ແລ້ວແມ່ນນິມໂຣດ. ສະຖານທີ່ດັ້ງເດີມຂອງຊາວຢາເຣັດ ໃນສະໄໝທີ່ຫໍບາເບນຕັ້ງຢູ່ໃນທົ່ງພຽງຊີນາ. ຕໍ່ມາເປັນເມືອງຫລວງຂອງບາບີໂລນ ແລະ ເປັນວັງຂອງກະສັດບາບີໂລນ, ລວມທັງເນບູກາດເນັດສາ ຜູ້ໄດ້ພາຊາວຢິວເປັນຈຳນວນຫລວງຫລາຍ ໄປເປັນຊະເລີຍໃນເມືອງນີ້ ຕິດຕາມດ້ວຍຄວາມພິນາດຂອງກຸງເຢຣູຊາເລັມ (587 ກ່ອນ ຄ.ສ). ຊາວຢິວໄດ້ເປັນຊະເລີຍຢູ່ບາບີໂລນເປັນເວລາ 70 ປີ ຈົນເຖິງສະໄໝຂອງກະສັດຊີຣັດ, ຜູ້ໄດ້ອະນຸຍາດໃຫ້ຊາວຢິວກັບຄືນສູ່ເຢຣູຊາເລັມ ເພື່ອໄປສ້ອມແປງພຣະວິຫານ. ສາດສະດາດານີເອນກໍໄດ້ອາໄສຢູ່ບ່ອນນີ້ຄືກັນ ພາຍໃຕ້ການປົກຄອງຂອງເນບູກາເນັດສາ, ເບັນຊັດຊາເຣ, ແລະ ດາຣິອຸດ ອົງທີໜຶ່ງ (ປຖກ 10:10; 11:1–9; 2 ກສ 24–25; ຢມຢ 27:1–29:10; ອຊກ 1:1; ດນອ 1–12; ອມນ 1:22; ອທ 1:33–43).

4. **ຊູຊາ** ເມືອງຫລວງຂອງຈັກກະພັບເປີເຊຍ ພາຍໃຕ້ການປົກຄອງຂອງດາຣິອຸດ ອົງທີໜຶ່ງ (ດາຣິອຸດມະຫາລາດ), ເຊເຊັດ (ອາຫາຊູເອຣັດ), ແລະ ອາກຕາເຊເຊັດ. ບ້ານຂອງລາຊີນີເອສະເທີ, ຜູ້ຊຶ່ງຄວາມກ້າຫານ ແລະ ສັດທາຂອງນາງ ໄດ້ໄວ້ຊີວິດຂອງຊາວຢິວ. ດານີເອນ ແລະ ຕໍ່ມາ ເນເຫມີຢາ ໄດ້ຮັບໃຊ້ຢູ່ທີ່ນີ້ (ນມຢ 1:1; 2:1; ອສທ 1:1; ດນອ 8:2).

5. **ທົ່ງພຽງດູຣາ** ຊັດຣາກ, ເມຊາກ, ແລະ ອາເບັດເນໂກ ໄດ້ຖືກໂຍນເຂົ້າເຕົາໄຟຮ້ອນ ເມື່ອພວກເຂົາປະຕິເສດບໍ່ຍອມນະມັດສະການຮູບປັ້ນຄຳທີ່ເນບູກາດເນັດສາໄດ້ສ້າງຂຶ້ນ; ພຣະບຸດຂອງພຣະເຈົ້າໄດ້ຄຸ້ມຄອງພວກເຂົາ, ແລະ ພວກເຂົາໄດ້ອອກມາຈາກເຕົາໄຟຮ້ອນ ໂດຍບໍ່ໄດ້ຮັບອັນຕະລາຍໃດໆ (ດນອ 3).

6. **ອັດຊີເຣຍ** ອັດຊູເຣເປັນເມືອງຫລວງແຫ່ງທຳອິດຂອງອັດຊີເຣຍ, ຕິດຕາມດ້ວຍນີເນເວ. ຜູ້ປົກຄອງອັດຊີເຣຍ ຊື່ ຊານມາເນເຊອົງທີຫ້າ ແລະ ຊາກໂກນອົງທີສອງ ໄດ້ຍຶດຄອງອານາຈັກພາກເໜືອຂອງອິດສະຣາເອນ ແລະ ໄດ້ພາສິບເຜົ່າໄປເປັນຊະເລີຍ ປະມານ 721 ປີ ກ່ອນ ຄ.ສ. (2 ກສ 14–15; 17–19). ອັດຊີເຣຍໄດ້ເປັນໄພຕໍ່ຢູດາ ຈົນເຖິງ 612 ປີ ກ່ອນ ຄ.ສ., ເມື່ອ ອັດຊີເຣຍໄດ້ຖືກປົກຄອງໂດຍບາບີໂລນ.

7. **ນີເນເວ** ເມືອງຫລວງຂອງອັດຊີເຣຍ. ອັດຊີເຣຍໄດ້ເຂົ້າໂຈມຕີແຜ່ນດິນຢູດາ ລະຫວ່າງການປົກຄອງຂອງເຮເຊກີຢາ ແລະ ການປະຕິບັດສາດສະໜາກິດຂອງເອຊາຢາ. ເຢຣູຊາເລັມ, ເມືອງຫລວງຂອງຢູດາ, ໄດ້ຖືກຮັກສາໄວ້ຢ່າງໜ້າອັດສະຈັນໃຈ ເມື່ອທູດອົງໜຶ່ງໄດ້ຂ້າທະຫານເປັນຈຳນວນ 185,000 ຄົນ (2 ກສ 19:32–37). ພຣະຜູ້ເປັນເຈົ້າໄດ້ບອກສາດສະດາໂຢນາໃຫ້ເອີ້ນປາວເມືອງໃຫ້ກັບໃຈ (ຢນ 1:2; 3:1–4).

8. **ຮາຣານ** ອັບຣາຮາມໄດ້ອາໄສຢູ່ບ່ອນນີ້ຊົ່ວໄລຍະໜຶ່ງ ກ່ອນໄປຫາການາອານ. ບິດາຂອງອັບຣາຮາມ ແລະ ນ້ອງຊາຍຂອງເພິ່ນໄດ້ອາໄສຢູ່ບ່ອນນີ້ຕໍ່ໄປ. ເຣເບກາ (ເມຍຂອງອີຊາກ), ແລະ ຣາເຊັນ, ເລອາ, ບິນຮາ, ແລະ ສິລະປາ (ບັນດາເມຍຂອງຢາໂຄບ), ໄດ້ມາຈາກເຂດນີ້ (ປຖກ 11:31–32; 24:10; 29:4–6; ອຣຮ 2:4–5).

9. **ກັກເກມິດ** ຟາຣາໂອ ເນໂກ ໄດ້ຜ່າຍແພ້ເນບູກາດເນັດສາ, ຊຶ່ງເຮັດໃຫ້ອຳນາດຂອງເອຢິບສິ້ນສຸດລົງ ໃນການາອານ (2 ຂຄ 35:20–36:6).

10. **ຊີໂດນ** ຫລານ ຊາຍ ຂອງ ຮາມຊື່ ຊີໂອນ ເປັນ ຄົນ ພົບ ເຫັນເມືອງນີ້, ແລະ ເປັນເມືອງຂອງຊາວການາອານພາກເໜືອສຸດ (ປຖກ 10:15–20). ມັນເປັນບ້ານຂອງເຢເຊເບນ, ຜູ້ໄດ້ນຳການນະມັດສະການພຣະບາອານເຂົ້າມາໃນອິດສະຣາເອນ (1 ກສ 16:30–33).

11. **ຕີເຣ** ບ່ອນນີ້ເປັນເມືອງທີ່ຕັ້ງຢູ່ແຄມນ້ຳ ແລະ ເປັນສູນການຄ້າທີ່ສຳຄັນໃນຊີເຣຍ. ຮີຣາມແຫ່ງຕີເຣ ໄດ້ສົ່ງໄມ້ແປກ ແລະ ຄຳ ແລະ ຊ່າງໄມ້ ໄປຊ່ວຍໂຊໂລໂມນສ້າງພຣະວິຫານຂອງເພິ່ນ (1 ກສ 5:1–10, 18; 9:11).

12. **ດາມັສກັດ** ອັບຣາຮາມ ໄດ້ຊ່ວຍ ຊີວິດ ໂລດ ຢູ່ບ່ອນນີ້. ມັນ ເປັນເມືອງ ສຳຄັນ ຂອງຊີເຣຍ. ລະຫວ່າງ ການ ປົກ ຄອງຂອງດາວິດ, ຊາວອິດສະຣາເອນໄດ້ຍຶດເອົາເມືອງນີ້. ເອລີຢາໄດ້ເຈີມຫົດສົງຮາຊາເອນ ໃຫ້ເປັນກະສັດປົກຄອງດາມັສກັດ (ປຖກ 14:14–15; 2 ຊມອ 8:5–6; 1 ກສ 19:15).

13. **ການາອານ** ອັບຣາຮາມ, ອີຊາກ, ຢາໂຄບ, ແລະ ລູກຫລານຂອງພວກເພິ່ນ ໄດ້ຮັບ ແຜ່ນດິນແຫ່ງນີ້ເປັນມູນມໍລະດົກອັນເປັນນິດ (ປຖກ 17:8; 28).

14. **ພູຊີນາຍ (ໂຮເຣັບ)** ພຣະຜູ້ເປັນເຈົ້າກ່າວກັບໂມເຊຈາກຟຸ່ມໄມ້ທີ່ລຸກເປັນໄຟ (ອພຍ 3:1–2). ໂມເຊໄດ້ຮັບກົດ ແລະ ພຣະບັນຍັດສິບປະການ (ອພຍ 19–20). ພຣະຜູ້ເປັນເຈົ້າໄດ້ກ່າວກັບເອລີຢາໃນສຸລະສຽງທີ່ແຜ່ວເບົາ (1 ກສ 19:8–12).

15. **ເອຊີໂອນເກເບ** ກະສັດ ໂຊ ໂລ ໂມນໄດ້ສ້າງ "ກອງທັບເຮືອ" ໃນເອຊີໂອນເກເບ (1 ກສ 9:26). ອາດເປັນທ່າເຮືອແຫ່ງນີ້ ທີ່ລາຊີນີແຫ່ງເຊບາ, ຫລັງຈາກໄດ້ຍິນກ່ຽວກັບຊື່ສຽງຂອງໂຊໂລໂມນ, ນາງໄດ້ຂຶ້ນຝັ່ງໄປພົບເພິ່ນ (1 ກສ 10:1–13).

16. **ເອຢິບ** ອັບຣາຮາມໄດ້ເດີນທາງມາບ່ອນນີ້ ເພາະຄວາມອຶດຢາກທີ່ຮ້າຍແຮງຢູ່ໃນແຜ່ນດິນອູເຣ (ອຣຮ 2:1, 21). ພຣະຜູ້ເປັນເຈົ້າໄດ້ບອກອັບຣາຮາມໃຫ້ສອນຊາວເອຢິບ ເຖິງສິ່ງທີ່ພຣະອົງໄດ້ເປີດເຜີຍແກ່ເພິ່ນ (ອຣຮ 3:15). ຫລັງຈາກພວກອ້າຍຂອງໂຢເຊັບໄດ້ຂາຍລາວໄປເປັນຂ້າທາດ (ປຖກ 37:28), ໂຢເຊັບ ໄດ້ກາຍເປັນຜູ້ດູແລຊັບສິນໃນເຮືອນຂອງໂປຕີຟາຢູ່ນີ້. ລາວໄດ້ຖືກສົ່ງເຂົ້າຄຸກ. ລາວໄດ້ແປຄວາມຝັນຂອງຟາຣາໂອ ແລະ ໄດ້ຮັບຕຳແໜ່ງເປັນເຈົ້ານາຍໃຫຍ່ໃນເອຢິບ. ໂຢເຊັບ ແລະ ພວກອ້າຍນ້ອງຂອງລາວ ໄດ້ຖືກນຳມາພົບກັນອີກ. ຢາໂຄບ ແລະ ຄອບຄົວຂອງເພິ່ນໄດ້ຍ້າຍມາຢູ່ນີ້ (ປຖກ 39–46). ລູກຫລານຂອງອິດສະຣາເອນໄດ້ອາໄສຢູ່ໂກເຊັນ ໃນໄລຍະທີ່ພວກເຂົາຕັ້ງຫລັກແຫລ່ງຢູ່ປະເທດເອຢິບ (ປຖກ 47:6).

ຊາວ ອິດສະ ຣາເອນ ໄດ້ ເພີ່ມທະວີຫລາຍຂຶ້ນ "ແລະ ມີກຳລັງຫລາຍ"; ແລ້ວພວກເຂົາໄດ້ຖືກຊາວເອຢິບຈັບໄປເປັນທາດ (ອພຍ 1:7–14). ຫລັງຈາກໂຣກລະບາດຫລາຍຢ່າງໄດ້ເກີດຂຶ້ນ ຟາຣາໂອ ຈຶ່ງໄດ້ອະນຸຍາດໃຫ້ຊາວອິດສະຣາເອນໜີຈາກປະເທດເອຢິບ (ອພຍ 12:31–41). ເຢເຣມີຢາໄດ້ຖືກພາໄປເອຢິບ (ຢມຢ 43:4–7).

17. **ກາຟະໂຕ (ກະເຣເຕ)** ແຜ່ນດິນບູຮານຂອງຊາວມີໂນອານ.

## 10. ການາອານໃນສະໄໝຂອງພຣະຄຳພີເດີມ



1. **ດານ (ລາອິດ)** ເຢໂຣໂບອາມໄດ້ສ້າງຕັ້ງຮູບງົວຄຳໂຕໜຶ່ງໄວ້ທີ່ອານາຈັກພາກເໜືອ ເພື່ອນະມັດສະການ (1 ກສ 12:26–33). ດານເປັນເຂດເໜືອສຸດຂອງອິດສະຣາເອນໃນສະໄໝບູຮານ.
2. **ພູກາເມນ** ເອລີຢາໄດ້ເວົ້າທ້າບັນດາສາດສະດາຂອງພຣະບາອານ ແລະ ໄດ້ເປີດຟ້າສະຫວັນໃຫ້ຝົນຕົກລົງມາ (1 ກສ 18:17–46).
3. **ເມກິດໂດ** ສະຖານທີ່ສູ້ຮົບຫລາຍເທື່ອ (ຜປ 4:13–16; 5:19; 2 ກສ 23:29; 2 ຂຄ 35:20–23). ໂຊໂລໂມນໄດ້ເກນເອົາຄົນງານມາສ້າງເມືອງເມກິດໂດ (1 ກສ 9:15). ກະສັດໂຢສີຢາແຫ່ງຢູດາໄດ້ຮັບບາດເຈັບໃນການສູ້ຮົບຕ້ານກັບຟາຣາໂອເນໂກແຫ່ງເອຢິບ (2 ກສ 23:29–30). ໃນການສະເດັດມາຄັ້ງທີສອງຂອງພຣະຜູ້ເປັນເຈົ້າ, ການສູ້ຮົບເທື່ອຍິ່ງໃຫຍ່ ແລະ ເທື່ອສຸດທ້າຍ ຈະເກີດຂຶ້ນທີ່ຮ່ອມພູເຢຊະເຣເອນ ໂດຍເປັນສ່ວນໜຶ່ງຂອງສົງຄາມອາມາເຄໂດນ (ຢອ 3:14; ພນມ 16:16; 19:11–21). ຊື່ *ອາມາເຄໂດນ* ເປັນການແປຕາມສຽງໃນພາສາກຣີກ ຈາກພາສາເຮັບເຣີ ທີ່ວ່າ *ຮາເມກິດໂດ,* ຫລື ຈາກພູເມກິດໂດ.
4. **ເຢຊະເຣເອນ** ຊື່ຂອງເມືອງໃນຮ່ອມພູໃຫຍ່ທີ່ສຸດ ແລະ ອຸດົມສົມບູນທີ່ສຸດ ທີ່ມີຊື່ດຽວກັນຂອງອິດສະຣາເອນ. ກະສັດຂອງອານາຈັກພາກເໜືອ ໄດ້ສ້າງວັງຢູ່ບ່ອນນີ້ (2 ຊມອ 2:8–9; 1 ກສ 21:1–2). ລາຊິນີເຢເຊເບນທີ່ຊົ່ວຮ້າຍ ໄດ້ອາໄສຢູ່ບ່ອນນີ້ ແລະ ໄດ້ສິ້ນຊີວິດຢູ່ບ່ອນນີ້ (1 ກສ 21; 2 ກສ 9:30).
5. **ເບັດຊານ** ຊາວອິດສະຣາເອນໄດ້ປະເຊີນໜ້າກັບຊາວການາອານຢູ່ບ່ອນນີ້ (ຢຊ 17:12–16). ຮ່າງກາຍຂອງໂຊນໄດ້ຖືກມັດໄວ້ກັບກຳແພງຂອງປ້ອມຍາມແຫ່ງນີ້ (1 ຊມອ 31:10–13).
6. **ໂດທານ** ໂຢເຊັບໄດ້ຖືກພວກອ້າຍຂອງລາວຂາຍໄປເປັນຂ້າທາດ (ປຖກ 37:17, 28; 45:4). ເອລີຊາໄດ້ເຫັນພາບນິມິດ ເຖິງພູນີ້ທີ່ເຕັມໄປດ້ວຍມ້າ ແລະ ລົດມ້າ (2 ກສ 6:12–17).
7. **ຊາມາເຣຍ** ເມືອງຫລວງຂອງອານາຈັກພາກເໜືອ (1 ກສ 16:24–29). ກະສັດອາຮາບໄດ້ສ້າງພຣະວິຫານໃຫ້ພຣະບາອານ (1 ກສ 16:32–33). ເອລີຢາ ແລະ ເອລີຊາ ໄດ້ປະຕິບັດສາດສະໜາກິດ (1 ກສ 18:2; 2 ກສ 6:19–20). ໃນ 721 ປີ ກ່ອນ ຄ.ສ. ຊາວອັດຊີເຣຍໄດ້ຍຶດຄອງມັນ, ໄດ້ສິ້ນສຸດການຈັບສິບເຜົ່າ (2 ກສ 18:9–10).
8. **ຊີເຄມ** ອັບຣາຮາມໄດ້ສ້າງແທ່ນບູຊາ (ປຖກ 12:6–7). ຢາໂຄບໄດ້ອາໄສຢູ່ໃກ້ບ່ອນນີ້. ຊີເມໂອນ ແລະ ເລວີ ໄດ້ຂ້າຜູ້ຊາຍທຸກຄົນຢູ່ໃນເມືອງນີ້ (ປຖກ 34:25). ການປຸກລະດົມຂອງໂຢຊວຍ ໃຫ້ "ເລືອກ . . . ວັນນີ້" ທີ່ຈະຮັບໃຊ້ພຣະເຈົ້າ ໄດ້ເກີດຂຶ້ນໃນຊີເຄມ (ຢຊ 24:15). ຢູ່ບ່ອນນີ້ ເຢໂຣໂບອາມໄດ້ສະຖາປະນາເມືອງຫລວງແຫ່ງທຳອິດຂອງອານາຈັກພາກເໜືອ (1 ກສ 12).
9. **ພູເອບານ ແລະ ພູເກຣີຊິມ** ໂຢຊວຍໄດ້ແບ່ງແຍກຊາວອິດສະຣາເອນອອກເປັນສອງກຸ່ມຢູ່ພູສອງໜ່ວຍນີ້—ພອນຂອງກົດໄດ້ຖືກປະກາດຈາກພູເກຣີຊິມ, ໃນຂະນະທີ່ຄຳສາບແຊ່ງຈາກພູເອບານ (ຢຊ 8:33). ຕໍ່ມາຊາວຊາມາເຣຍໄດ້ສ້າງພຣະວິຫານຫລັງໜຶ່ງຂຶ້ນເທິງພູເກຣີຊິມ (2 ກສ 17:32–33).
10. **ເປນີເອນ (ເປນີເອນ)** ຢູ່ບ່ອນນີ້ ຢາໂຄບໄດ້ຕໍ່ສູ້ກັບທູດຂອງພຣະຜູ້ເປັນເຈົ້າ (ປຖກ 32:24–32). ກິເດໂອນໄດ້ທຳລາຍປ້ອມຍາມຂອງຊາວມີດີອານ (ຜປ 8:5, 8–9).
11. **ຢົບປາ** ໂຢນາໄດ້ຂຶ້ນເຮືອຈາກບ່ອນນີ້ ທີ່ມຸ້ງໄປຫາທາຣາສິດ ເພື່ອຫລີກລ້ຽງຈາກການໄປເຜີຍແຜ່ຂອງລາວ ທີ່ນີເນເວ (ຢນ 1:1–3).
12. **ຊີໂລ** ໃນສະໄໝຂອງຜູ້ຕັດສິນ, ເມືອງຫລວງຂອງອິດສະຣາເອນ ແລະ ສະຖານທີ່ນະມັດສະການ ໄດ້ຕັ້ງຢູ່ບ່ອນນີ້ (1 ຊມອ 4:3–4).
13. **ເບັດເອນ (ລູຊ)** ອັບຣາຮາມໄດ້ແຍກຈາກໂລດຢູ່ບ່ອນນີ້ (ປຖກ 13:1–11) ແລະ ໄດ້ຮັບພາບນິມິດ (ປຖກ 13; ອຣຮ 2:19–20). ຢາໂຄບໄດ້ຮັບພາບນິມິດກ່ຽວກັບຂັ້ນໄດທີ່ຂຶ້ນໄປເຖິງຟ້າສະຫວັນ (ປຖກ 28:10–22). ສະຖານທີ່ນະມັດສະການໄດ້ຕັ້ງຢູ່ບ່ອນນີ້ຊົ່ວໄລຍະໜຶ່ງ (ຜປ 20:26–28). ເຢໂຣໂບອາມໄດ້ສ້າງຕັ້ງຮູບງົວຄຳໂຕໜຶ່ງໄວ້ທີ່ອານາຈັກພາກເໜືອ ເພື່ອນະມັດສະການ (1 ກສ 12:26–33).
14. **ກິເບໂອນ** ຊາວຮີວີຈາກບ່ອນນີ້ ໄດ້ຫລອກໂຢຊວຍໃຫ້ເຮັດສົນທິສັນຍາ (ຢຊ 9). ດວງຕາເວັນຢຸດສະຫງັກ ຕອນໂຢຊວຍໄດ້ຊະນະການສູ້ຮົບ (ຢຊ 10:2–13). ບ່ອນນີ້ຍັງເປັນບ່ອນຕັ້ງສະຖານທີ່ນະມັດສະການຊົ່ວຄາວບຳອິກ (1 ຂຄ 16:39).
15. **ກາສາ, ອັດຊະໂດດ, ອາສະເກໂລນ, ເອັກໂຣນ, ກາດ (ຫ້າເມືອງຂອງຟີລິດສະຕິນ)** ຊາວຟີລິດສະຕິນ ມັກເຮັດສົງຄາມກັບຊາວອິດສະຣາເອນຈາກເມືອງເຫລົ່ານີ້.
16. **ເບັດເລເຮັມ** ນາງຣາເຊັນໄດ້ຖືກຝັງໄວ້ຢູ່ໃກ້ບ່ອນນີ້ (ປຖກ 35:19). ນາງຣຸດ ແລະ ໂບອາດ ໄດ້ອາໄສຢູ່ບ່ອນນີ້ (ນຣ 1:1–2; 2:1, 4). ມັນໄດ້ຖືກເອີ້ນວ່າ ເມືອງຂອງດາວິດ (ລກ 2:4).
17. **ເຮັບໂຣນ** ອັບຣາຮາມ (ປຖກ 13:18), ອີຊາກ, ຢາໂຄບ (ປຖກ 35:27), ດາວິດ (2 ຊມອ 2:1–4), ແລະ ອັບຊາໂລມ (2 ຊມອ 15:10) ໄດ້ອາໄສຢູ່ບ່ອນນີ້. ບ່ອນນີ້ເປັນເມືອງຫລວງແຫ່ງທຳອິດຂອງຢູດາ ພາຍໃຕ້ການປົກຄອງຂອງກະສັດດາວິດ (2 ຊມອ 2:11). ເຊື່ອກັນວ່າ ອັບຣາຮາມ, ນາງຊາຣາ, ອີຊາກ, ນາງເຣເບກາ, ຢາໂຄບ, ແລະ ນາງເລອາ ໄດ້ຖືກຝັງໄວ້ຢູ່ບ່ອນນີ້ ໃນຖ້ຳມັກເປລາ (ປຖກ 23:17–20; 49:31, 33).
18. **ເອນເກດີ** ດາວິດໄດ້ລີ້ຈາກໂຊນ ແລະ ໄດ້ໄວ້ຊີວິດໂຊນ (1 ຊມອ 23:29–24:22).
19. **ເກຣາ** ອັບຣາຮາມ ແລະ ອີຊາກ ໄດ້ອາໄສຢູ່ບ່ອນນີ້ຊົ່ວໄລຍະໜຶ່ງ (ປຖກ 20–22; 26).
20. **ເບເອນເຊບາ** ອັບຣາຮາມໄດ້ຂຸດສ້າງຢູ່ບ່ອນນີ້ ແລະ ໄດ້ເຮັດພັນທະສັນຍາກັບອາບີເມເຫລັກ (ປຖກ 21:31). ອີກຊາກໄດ້ເຫັນພຣະຜູ້ເປັນເຈົ້າ (ປຖກ 26:17, 23–24), ແລະ ຢາໂຄບໄດ້ອາໄສຢູ່ໃນບ່ອນນີ້ (ປຖກ 35:10; 46:1).
21. **ໂຊໂດມ ແລະ ໂກໂມຣາ** ໂລດໄດ້ເລືອກທີ່ຈະອາໄສຢູ່ໂຊໂດມ (ປຖກ 13:11–12; 14:12). ພຣະເຈົ້າໄດ້ທຳລາຍໂຊໂດມ ແລະ ໂກໂມຣາ ເພາະຄວາມຊົ່ວຮ້າຍ (ປຖກ 19:24–26). ຕໍ່ມາພຣະເຢຊູໄດ້ໃຊ້ເມືອງເຫລົ່ານີ້ ເປັນສັນຍາລັກເຖິງຄວາມຊົ່ວຮ້າຍ (ມທ 10:15).

## 11. ແຜ່ນດິນສັກສິດໃນສະໄໝຂອງພຣະຄຳພີໃໝ່



1. **ຕີເຣ ແລະ ຊີໂດນ** ພຣະເຢຊູໄດ້ປຽບທຽບໂຂຣາຊິນ ແລະ ເບັດຊາອີດາ ໃສ່ກັບ ຕີເຣ ແລະ ຊີໂດນ (ມທ 11:20–22). ພຣະອົງໄດ້ປິ່ນປົວລູກສາວຂອງແມ່ຍິງຄົນຕ່າງຊາດ (ມທ 15:21–28).
2. **ພູແຫ່ງການປ່ຽນສະພາບ** ພຣະເຢຊູໄດ້ປ່ຽນສະພາບຢູ່ຕໍ່ໜ້າເປໂຕ, ຢາໂກໂບ, ແລະ ໂຢຮັນ, ແລະ ເຂົາເຈົ້າໄດ້ຮັບຂໍກະແຈຂອງອານາຈັກ (ມທ 17:1–13). (ບາງຄົນເຊື່ອວ່າ ພູແຫ່ງການປ່ຽນສະພາບ ຄືພູເຮີໂມນ; ບາງຄົນກໍເຊື່ອວ່າເປັນພູຕາໂບເຣ.)
3. **ກາຍຊາເຣຍ ຟີລິບປອຍ** ເປໂຕໄດ້ເປັນພະຍານວ່າພຣະເຢຊູຄືພຣະຄຣິດ ແລະ ໄດ້ຮັບສັນຍາວ່າ ຈະໄດ້ຮັບຂໍກະແຈຂອງອານາຈັກ (ມທ 16:13–20). ພຣະເຢຊູໄດ້ບອກລ່ວງໜ້າເຖິງການສິ້ນພຣະຊົນ ແລະ ການຟື້ນຄືນພຣະຊົນຂອງພຣະອົງ (ມທ 16:21–28).
4. **ພາກພື້ນຂອງຄາລິເລ** ພຣະເຢຊູໄດ້ໃຊ້ຊີວິດສ່ວນໃຫຍ່ຂອງພຣະອົງ ແລະ ໄດ້ປະຕິບັດສາດສະໜາກິດຂອງພຣະອົງຢູ່ໃນຄາລິເລ (ມທ 4:23–25). ຢູ່ບ່ອນນີ້ ພຣະອົງໄດ້ເທດສະໜາທີ່ໂນນພູ (ມທ 5–7); ໄດ້ປິ່ນປົວຄົນຂີ້ທູດ (ມທ 8:1–4); ແລະ ໄດ້ເລືອກ, ໄດ້ແຕ່ງຕັ້ງ, ແລະ ໄດ້ສົ່ງອັກຄະສາວົກສິບສອງອອກໄປ, ຊຶ່ງໃນບັນດາຜູ້ຄົນເຫລົ່ານັ້ນ ຢູດາ ອິສະກາຣີອົດ ເທົ່ານັ້ນທີ່ປະກົດວ່າບໍ່ແມ່ນຊາວຄາລິເລ (ມຣກ 3:13–19). ໃນຄາລິເລ ພຣະຄຣິດທີ່ໄດ້ຟື້ນຄືນຊີວິດແລ້ວ ໄດ້ປະກົດຕໍ່ບັນດາອັກຄະສາວົກ (ມທ 28:16–20).
5. **ທະເລຄາລິເລ, ຕໍ່ມາຖືກເອີ້ນວ່າ ທະເລຕີເບເຣຍ** ພຣະເຢຊູໄດ້ສອນຈາກເຮືອຂອງເປໂຕ (ລກ 5:1–3) ແລະ ໄດ້ເອີ້ນເປໂຕ, ອັນເດອາ, ຢາໂກໂບ, ແລະ ໂຢຮັນ ເພື່ອເປັນຜູ້ຫາຄົນ (ມທ 4:18–22; ລກ 5:1–11). ພຣະອົງຍັງໄດ້ຫ້າມລົມພະຍຸນຳອີກ (ລກ 8:22–25), ໄດ້ສອນຄຳອຸປະມາຈາກເຮືອ (ມທ 13), ໄດ້ຍ່າງເທິງໜ້ານ້ຳ (ມທ 14:22–32), ແລະ ໄດ້ປະກົດຕໍ່ສານຸສິດຂອງພຣະອົງຫລັງຈາກພຣະອົງໄດ້ຟື້ນຄືນພຣະຊົນແລ້ວ (ຢຮ 21).
6. **ເບັດຊາອີດາ** ເປໂຕ, ອັນເດອາ, ແລະ ຟີລິບ ໄດ້ເກີດໃນເບັດຊາອີດາ (ຢຮ 1:44). ພຣະເຢຊູໄດ້ສະເດັດອອກໄປກັບອັກຄະສາວົກຂອງພຣະອົງ ໃກ້ເບັດຊາອີດາ. ຝູງຊົນໄດ້ຕິດຕາມພຣະອົງໄປ, ແລະ ພຣະອົງໄດ້ລ້ຽງ 5,000 ຄົນ (ລກ 9:10–17; ຢຮ 6:1–14). ຢູ່ບ່ອນນີ້ ພຣະເຢຊູໄດ້ປິ່ນປົວຜູ້ຊາຍຕາບອດຄົນໜຶ່ງ (ມຣກ 8:22–26).
7. **ກາເປນາອູມ** ນີ້ແມ່ນບ້ານຂອງເປໂຕ (ມທ 8:5, 14). ໃນກາເປນາອູມ, ຊຶ່ງມັດທາຍໄດ້ເອີ້ນວ່າ "ເມືອງຂອງພຣະເຢຊູເອງ," ພຣະເຢຊູໄດ້ປິ່ນປົວຄົນງ່ອຍ (ມທ 9:1–7; ມຣກ 2:1–12), ໄດ້ໂຜດຂ້ອຍໃຊ້ຂອງນາຍທະຫານ, ໄດ້ໂຜດແມ່ເຖົ້າຂອງເປໂຕ (ມທ 8:5–15), ໄດ້ເອີ້ນມັດທາຍໃຫ້ເປັນອັກຄະສາວົກຄົນໜຶ່ງຂອງພຣະອົງ (ມທ 9:9), ໄດ້ໂຜດຄົນຕາບອດ, ໄດ້ຂັບໄລ່ຜີມານຮ້າຍອອກໄປ (ມທ 9:27–33), ໄດ້ໂຜດຊາຍມືລີບໃນວັນຊະບາໂຕ (ມທ 12:9–13), ໄດ້ສິດສອນເລື່ອງອາຫານທິບແຫ່ງຊີວິດ (ຢຮ 6:22–65), ແລະ ໄດ້ເຫັນດ້ວຍເລື່ອງການຈ່າຍພາສີ, ໂດຍບອກເປໂຕໃຫ້ໄປເອົາເງິນຈາກປາກຂອງປາ (ມທ 17:24–27).
8. **ມັກດາລາ** ນີ້ແມ່ນບ້ານຂອງນາງມາຣີ ມັກດາລີນ (ມຣກ 16:9). ພຣະເຢຊູໄດ້ມາບ່ອນນີ້ ຫລັງຈາກໄດ້ລ້ຽງເຂົ້າ 4,000 ຄົນ (ມທ 15:32–39), ແລະ ພວກຟາຣີຊາຍ ແລະ ພວກຊາດູກາຍ ໄດ້ຂໍໃຫ້ພຣະອົງສະແດງເຄື່ອງໝາຍຈາກສະຫວັນແກ່ພວກເຂົາ (ມທ 16:1–4).
9. **ການາ** ພຣະເຢຊູໄດ້ປ່ຽນນ້ຳເປັນເຫລົ້າອະງຸ່ນ (ຢຮ 2:1–11) ແລະ ໄດ້ໂຜດລູກຊາຍຄົນໜຶ່ງຂອງເຈົ້ານາຍຢູ່ກາເປນາອູມທາຍດີ (ຢຮ 4:46–54). ການາກໍເປັນບ້ານຂອງນະທານາເອັນນຳອີກ (ຢຮ 21:2).
10. **ນາຊາເຣັດ** ການປະກາດຂອງທູດຕໍ່ນາງມາຣີ ແລະ ໂຢເຊັບ ໄດ້ເກີດຂຶ້ນໃນນາຊາເຣັດ (ມທ 1:18–25; ລກ 1:26–38; 2:4–5). ຫລັງຈາກກັບມາຈາກປະເທດເອຢິບ, ພຣະເຢຊູໄດ້ໃຊ້ຊີວິດໃນໄວເດັກ ແລະ ໄວໜຸ່ມຂອງພຣະອົງຢູ່ບ່ອນນີ້ (ມທ 2:19–23; ລກ 2:51–52), ໄດ້ປະກາດວ່າ ພຣະອົງເປັນພຣະເມຊີອາ, ແລະ ໄດ້ຖືກຜູ້ຄົນຂອງພຣະອົງເອງປະຕິເສດ (ລກ 4:14–32).
11. **ເຢຣີໂກ** ພຣະເຢຊູໄດ້ໂຜດຊາຍຕາບອດໃຫ້ເຫັນຮຸ່ງ (ລກ 18:35–43). ພຣະອົງໄດ້ຮ່ວມຮັບປະທານອາຫານຄ່ຳນຳຊັກຂ່າຍ, "ນາຍດ່ານພາສີ" (ລກ 19:1–10).
12. **ເບັດທາບາຣາ** ໂຢຮັນບັບຕິສະໂຕໄດ້ເປັນພະຍານວ່າລາວແມ່ນ "ສຽງຂອງຄົນໜຶ່ງທີ່ຮ້ອງໃນຖິ່ນແຫ້ງແລ້ງກັນດານ" (ຢຮ 1:19–28). ໂຢຮັນບັບຕິສະໂຕໄດ້ໃຫ້ບັບຕິສະມາແກ່ພຣະເຢຊູໃນແມ່ນ້ຳຈໍແດນ ແລະ ໄດ້ເປັນພະຍານວ່າ ພຣະເຢຊູຄືພຣະເມສານ້ອຍຂອງພຣະເຈົ້າ (ຢຮ 1:28–34).
13. **ຖິ່ນແຫ້ງແລ້ງຢູດາຍ** ໂຢຮັນບັບຕິສະໂຕໄດ້ສັ່ງສອນຢູ່ໃນຖິ່ນແຫ້ງແລ້ງກັນດານແຫ່ງນີ້ (ມທ 3:1–4), ບ່ອນທີ່ພຣະເຢຊູໄດ້ຖືສິນອົດເຂົ້າເປັນເວລາ 40 ວັນ ແລະ ໄດ້ຖືກທົດລອງ (ມທ 4:1–11).
14. **ເອມາອູດ** ພຣະຄຣິດທີ່ໄດ້ຟື້ນຄືນພຣະຊົນແລ້ວ ໄດ້ຍ່າງໃນເສັ້ນທາງໄປຫາເອມາອູດ ກັບສານຸສິດສອງຄົນຂອງພຣະອົງ (ລກ 24:13–32).
15. **ເບັດຟາເຄ** ສານຸສິດສອງຄົນຂອງພຣະເຢຊູໄດ້ພາລໍແມ່ໂຕໜຶ່ງມາໃຫ້ພຣະອົງຂີ່ເຂົ້າໄປນະຄອນເຢຣູຊາເລັມຢ່າງມີໄຊ (ມທ 21:1–11).
16. **ເບັດທານີ** ນີ້ແມ່ນບ້ານຂອງນາງມາຣີ, ນາງມາທາ, ແລະ ລາຊາໂຣ (ຢຮ 11:1). ນາງມາຣີໄດ້ຟັງຖ້ອຍຄຳຂອງພຣະເຢຊູ, ແລະ ພຣະເຢຊູໄດ້ກ່າວກັບນາງມາທາເລື່ອງ "ການເລືອກເອົາສິ່ງທີ່ດີ" (ລກ 10:38–42); ພຣະເຢຊູໄດ້ໂຜດລາຊາໂຣໃຫ້ເປັນຄືນມາມີຊີວິດ (ຢຮ 11:1–44); ແລະ ນາງມາຣີໄດ້ທົດສົງພຣະບາດຂອງພຣະເຢຊູ (ມທ 26:6–13; ຢຮ 12:1–8).
17. **ເບັດເລເຮັມ** ພຣະເຢຊູໄດ້ກຳເນີດ ແລະ ໄດ້ຖືກວາງໄວ້ຢູ່ໃນຮາງຫຍ້າ (ລກ 2:1–7); ເຫລົ່າທູດໄດ້ມາບອກຂ່າວແກ່ຜູ້ລ້ຽງແກະເຖິງການກຳເນີດຂອງພຣະເຢຊູ (ລກ 2:8–20); ດາວດວງໜຶ່ງໄດ້ນຳທາງພວກໂຫລາຈານມາຫາພຣະເຢຊູ (ມທ 2:1–12); ແລະ ເຮໂຣດໄດ້ຂ້າເດັກນ້ອຍ (ມທ 2:16–18).

## 12. ເຢຣູຊາເລັມໃນສະໄໝຂອງພຣະເຢຊູ



1. **ໂຄລະໂຄທາ** ອາດເປັນໄປໄດ້ວ່າ ເປັນສະຖານທີ່ຄຶງພຣະເຢຊູ (ມທ 27:33–37).
2. **ສວນອຸບມຸງ** ອາດເປັນໄປໄດ້ວ່າ ເປັນສະຖານທີ່ສຳລັບອຸບມຸງ ບ່ອນທີ່ພຣະກາຍຂອງພຣະເຢຊູໄດ້ຖືກເອົາມາວາງໄວ້ (ຢຮ 19:38–42). ພຣະຄຣິດທີ່ໄດ້ຟື້ນຄືນພຣະຊົນແລ້ວ ໄດ້ປະກົດຕົວຕໍ່ນາງມາຣີ ໄທມັກດາລາໃນສວນ ຢູ່ນອກອຸບມຸງຂອງພຣະອົງ (ຢຮ 20:1–17).
3. **ປ້ອມຍາມອັນໂຕນີ** ພຣະເຢຊູອາດຖືກກ່າວຫາ, ກ່າວໂທດ, ເຍາະເຍີ້ຍ, ແລະ ຖືກຂ້ຽນຕີ ຢູ່ບ່ອນນີ້ (ຢຮ 18:28–19:16). ໂປໂລໄດ້ຖືກຈັບ ແລະ ໄດ້ເລົ່າເລື່ອງການປ່ຽນໃຈເຫລື້ອມໃສຂອງລາວ (ກຈກ 21:31–22:21).
4. **ສະນ້ຳເບັດຊະທາ** ພຣະເຢຊູໄດ້ປິ່ນປົວຄົນປ່ວຍຄົນໜຶ່ງໃນວັນຊະບາໂຕ (ຢຮ 5:2–9).
5. **ພຣະວິຫານ** ຄັບຣິເອນໄດ້ໃຫ້ສັນຍາຊາຂາຣີຢາວ່າ ນາງເອລີຊາເບັດ ຈະມີລູກຊາຍ (ລກ 1:5–25). ຜ້າກັ້ງໃນພຣະວິຫານໄດ້ຈີກອອກເປັນສອງທ່ອນແຕ່ເທິງຮອດລຸ່ມ ຕອນພຣະຜູ້ຊ່ວຍໃຫ້ລອດສິ້ນພຣະຊົນ (ມທ 27:51).
6. **ລະບຽງຂອງໂຊໂລໂມນ** ພຣະເຢຊູໄດ້ປະກາດວ່າ ພຣະອົງເປັນພຣະບຸດຂອງພຣະເຈົ້າ. ຊາວຢິວໄດ້ພະຍາຍາມທີ່ຈະແກວ່ງກ້ອນຫີນໃສ່ພຣະອົງ (ຢຮ 10:22–39). ເປໂຕໄດ້ສັ່ງສອນເຖິງການກັບໃຈ ຫລັງຈາກໄດ້ປິ່ນປົວຊາຍເປ້ຍລ່ອຍຄົນໜຶ່ງໃຫ້ຫາຍດີ (ກຈກ 3:11–26).
7. **ປະຕູງາມ** ເປໂຕ ແລະ ໂຢຮັນ ໄດ້ປິ່ນປົວຊາຍເປ້ຍລ່ອຍຄົນໜຶ່ງ (ກຈກ 3:1–10).
8. **ຍອດພຣະວິຫານ** ພຣະເຢຊູໄດ້ຖືກຊາຕານທົດລອງ (ມທ 4:5–7). (ອາດເປັນສະຖານທີ່ແນ່ນອນສຳລັບເຫດການນີ້.)
9. **ພູສັກສິດ** (ບໍ່ລະບຸສະຖານທີ່)
   - *ກ.* ຕາມທີ່ບອກເລົ່າກັນມາ ຢູ່ບ່ອນນີ້ອັບຣາຮາມໄດ້ສ້າງແທ່ນບູຊາຂຶ້ນ ເພື່ອຖວາຍອີຊາກ (ປຖກ 22:9–14).
   - *ຂ.* ໂຊໂລໂມນໄດ້ສ້າງພຣະວິຫານ (1 ກສ 6:1–10; 2 ຂຄ 3:1).
   - *ຄ.* ຊາວບາບີໂລນໄດ້ທຳລາຍພຣະວິຫານ ປະມານ 587 ປີ ກ່ອນ ຄ.ສ. (2 ກສ 25:8–9).
   - *ງ.* ເຊຣຸບບາເບນໄດ້ສ້ອມແປງພຣະວິຫານ ປະມານ 515 ປີ ກ່ອນ ຄ.ສ. (ອຊຣ 3:8–10; 5:2; 6:14–16).
   - *ຈ.* ເຮໂຣດໄດ້ຂະຫຍາຍລານພຣະວິຫານ ແລະ ໄດ້ສ້ອມແປງພຣະວິຫານ ເລີ່ມແຕ່ 17 ປີ ກ່ອນ ຄ.ສ. ກຸມມານນ້ອຍເຢຊູໄດ້ຖືກນຳໄປຖວາຍ (ລກ 2:22–39).
   - *ສ.* ເມື່ອເຖິງ 12 ພັນສາ, ພຣະເຢຊູໄດ້ສິດສອນຢູ່ໃນພຣະວິຫານ (ລກ 2:41–50).
   - *ຊ.* ພຣະເຢຊູໄດ້ຊຳລະພຣະວິຫານ (ມທ 21:12–16; ຢຮ 2:13–17).
   - *ຍ.* ພຣະເຢຊູໄດ້ສອນໃນພຣະວິຫານຫລາຍເທື່ອ (ມທ 21:23–23:39; ຢຮ 7:14–8:59).
   - *ດ.* ຊາວໂຣມພາຍໃຕ້ການປົກຄອງຂອງຕີໂຕ ໄດ້ທຳລາຍພຣະວິຫານ ໃນ ຄ.ສ. 70.
10. **ສວນເຄັດເຊມາເນ** ພຣະເຢຊູໄດ້ຮັບທຸກທໍລະມານ, ໄດ້ຖືກທໍລະຍົດ, ແລະ ໄດ້ຖືກຈັບກຸມ (ມທ 26:36–46; ລກ 22:39–54).
11. **ພູໝາກກອກເທດ**
    - *ກ.* ພຣະເຢຊູໄດ້ບອກລ່ວງໜ້າເຖິງຄວາມພິນາດຂອງເຢຣູຊາເລັມ ແລະ ພຣະວິຫານ. ພຣະອົງຍັງໄດ້ກ່າວເຖິງການສະເດັດມາຄັ້ງທີສອງນຳອີກ (ມທ 24:3–25:46; ເບິ່ງ ຈສ—ມ ນຳອີກ).
    - *ຂ.* ຈາກບ່ອນນີ້ ພຣະເຢຊູໄດ້ຂຶ້ນສູ່ສະຫວັນ (ກຈກ 1:9–12).
    - *ຄ.* ໃນວັນທີ 24 ເດືອນຕຸລາ, 1841, ແອວເດີ ອໍສັນ ຮາຍດ໌ ໄດ້ອຸທິດແຜ່ນດິນສັກສິດ ສຳລັບການກັບຄືນມາຂອງລູກຫລານຂອງອັບຣາຮາມ.
12. **ບໍ່ນ້ຳກີໂຮນ** ໂຊໂລໂມນໄດ້ຮັບການເຈີມໃຫ້ເປັນກະສັດ (1 ກສ 1:38–39). ເຮເຊກີຢາໄດ້ໃຫ້ຂຸດຮູໃຕ້ດິນ ເພື່ອນຳນ້ຳຈາກບໍ່ນ້ຳເຂົ້າມາໃນເມືອງ (2 ຂຄ 32:30).
13. **ປະຕູນ້ຳ** ເອຊະຣາໄດ້ອ່ານ ແລະ ແປກົດຂອງໂມເຊໃຫ້ແກ່ຜູ້ຄົນ (ນມຢ 8:1–8).
14. **ຮ່ອມພູຮິນໂນມ** ຜູ້ຄົນໄດ້ນະມັດສະການພຣະປອມຊື່ໂມເຫລັກ, ຊຶ່ງຮ່ວມດ້ວຍການຂ້າເດັກເປັນເຄື່ອງຖວາຍ (2 ກສ 23:10; 2 ຂຄ 28:3).
15. **ເຮືອນຂອງກາຢະຟາ** ພຣະເຢຊູໄດ້ຖືກນຳໄປຢູ່ຕໍ່ໜ້າຂອງກາຢະຟາ (ມທ 26:57–68). ເປໂຕໄດ້ປະຕິເສດວ່າລາວບໍ່ຮູ້ຈັກພຣະເຢຊູ (ມທ 26:69–75).
16. **ຫ້ອງຊັ້ນເທິງ** ສະຖານທີ່ທີ່ເຊື່ອກັນວ່າເປັນບ່ອນທີ່ພຣະເຢຊູໄດ້ສະຫລອງງານປັດສະຄາ ແລະ ໄດ້ຈັດຕັ້ງສິນລະລຶກ (ມທ 26:20–30). ພຣະອົງໄດ້ລ້າງຕີນຂອງອັກຄະສາວົກ (ຢຮ 13:4–17) ແລະ ໄດ້ສອນເຂົາເຈົ້າ (ຢຮ 13:18–17:26).
17. **ວັງຂອງເຮໂຣດ** ພຣະຄຣິດໄດ້ຖືກພາໄປຢູ່ຕໍ່ໜ້າເຮໂຣດ, ອາດເປັນສະຖານທີ່ນີ້ (ລກ 23:7–11).
18. **ເຢຣູຊາເລັມ** (ບໍ່ລະບຸສະຖານທີ່)
    - *ກ.* ເມນຄີເສເດັກໄດ້ປົກຄອງເປັນກະສັດຂອງຊາເລັມ (ປຖກ 14:18).
    - *ຂ.* ກະສັດດາວິດໄດ້ຍຶດຄອງເມືອງຈາກຊາວເຢບຸດ (2 ຊມອ 5:7; 1 ຂຄ 11:4–7).
    - *ຄ.* ເມືອງໄດ້ຖືກທຳລາຍໂດຍຊາວບາບີໂລນ ປະມານ 587 ປີ ກ່ອນ ຄ.ສ. (2 ກສ 25:1–11).
    - *ງ.* ພຣະວິນຍານບໍລິສຸດໄດ້ສະຖິດຢູ່ກັບຫລາຍຄົນ ໃນວັນເພັນເຕຄໍສະເຕ (ກຈກ 2:1–4).
    - *ຈ.* ເປໂຕ ແລະ ໂຢຮັນ ໄດ້ຖືກຈັບ ແລະ ໄດ້ນຳໄປຢູ່ຕໍ່ໜ້າສະພາ (ກຈກ 4:1–23).
    - *ສ.* ອານາເນຍ ແລະ ຊັບຟີຣາໄດ້ຕົວະພຣະຜູ້ເປັນເຈົ້າ ແລະ ໄດ້ຕາຍໄປ (ກຈກ 5:1–10).
    - *ຊ.* ເປໂຕ ແລະ ໂຢຮັນ ໄດ້ຖືກຈັບ, ແຕ່ທູດອົງໜຶ່ງໄດ້ປົດປ່ອຍເຂົາເຈົ້າອອກຈາກຄຸກ (ກຈກ 5:17–20).
    - *ຍ.* ອັກຄະສາວົກໄດ້ເລືອກຜູ້ຊາຍເຈັດຄົນໃຫ້ມາຊ່ວຍເຂົາເຈົ້າ (ກຈກ 6:1–6).
    - *ດ.* ປະຈັກພະຍານຂອງຊະເຕຟາໂນຕໍ່ຊາວຢິວ ໄດ້ຖືກປະຕິເສດ, ແລະ ລາວຖືກຄວ່າງກ້ອນຫີນໃສ່ ຈົນເຖິງແກ່ຄວາມຕາຍ (ກຈກ 6:8–7:60).
    - *ຕ.* ຢາໂກໂບໄດ້ຖືກຂ້າຍ້ອນຄວາມເຊື່ອ (ກຈກ 12:1–2).
    - *ຖ.* ທູດອົງໜຶ່ງໄດ້ປົດປ່ອຍເປໂຕຈາກຄຸກ (ກຈກ 12:5–11).
    - *ທ.* ອັກຄະສາວົກໄດ້ພິຈາລະນາບັນຫາເລື່ອງພິທີຕັດ (ກຈກ 15:5–29).
    - *ນ.* ຊາວໂຣມພາຍໃຕ້ການປົກຄອງຂອງຕີໂຕ ໄດ້ທຳລາຍເມືອງ ໃນ ຄ.ສ. 70.

## 13. ການເດີນທາງໄປເຜີຍແຜ່ຂອງອັກຄະສາວົກໂປໂລ



1. **ກາສາ** ຟີລິບ ໄດ້ສັ່ງສອນ ເຖິງພຣະຄຣິດ ແລະ ໄດ້ບັບຕິສະມາ ໃຫ້ຂ້າຣາຊການຊາວເອທີໂອເປຍຄົນໜຶ່ງ ຕອນລາວເດີນທາງໄປກາສາ (ກຈກ 8:26–39).
2. **ເຢຣູຊາເລັມ** ເບິ່ງ ແຜນທີ່ 12 ສຳລັບເຫດການໃນເຢຣູຊາເລັມ.
3. **ຢົບປາ** ເປໂຕໄດ້ຮັບພາບນິມິດ ວ່າພຣະເຈົ້າໄດ້ມອບຂອງປະທານແຫ່ງການກັບໃຈ ໃຫ້ແກ່ຄົນຕ່າງຊາດ (ກຈກ 10; 11:5–18). ເປໂຕໄດ້ນຳຕາບີທາໃຫ້ເປັນຄືນມາມີຊີວິດ (ກຈກ 9:36–42).
4. **ຊາມາເຣຍ** ຟີລິບ ໄດ້ປະຕິບັດສາດສະໜາກິດໃນຊາມາເຣຍ (ກຈກ 8:5–13), ແລະ ຕໍ່ມາເປໂຕ ແລະ ໂຢຮັນ ໄດ້ສອນຢູ່ທີ່ນີ້ (ກຈກ 8:14–25). ຫລັງຈາກເຂົາເຈົ້າໄດ້ມອບຂອງປະທານແຫ່ງພຣະວິນຍານບໍລິສຸດແລ້ວ, ຊີໂມນໝໍເວດມົນຄາຖາ ໄດ້ຂໍຊື້ຂອງປະທານຈາກເຂົາເຈົ້າ (ກຈກ 8:9–24).
5. **ກາຍຊາເຣຍ** ຢູ່ບ່ອນນີ້, ຫລັງຈາກທູດອົງໜຶ່ງໄດ້ປະຕິບັດສາດສະໜາກິດແກ່ນາຍຮ້ອຍຄົນໜຶ່ງຊື່ ໂກເນລີໂອ, ເປໂຕໄດ້ອະນຸຍາດໃຫ້ລາວຮັບບັບຕິສະມາ (ກຈກ 10). ຢູ່ບ່ອນນີ້ໂປໂລໄດ້ກ່າວແກ້ຄະດີຢູ່ຕໍ່ໜ້າອັກຣິປາ (ກຈກ 25–26; ເບິ່ງ ຈສ—ປ 1:24–25 ນຳອີກ).
6. **ດາມັສກັດ** ພຣະເຢຊູໄດ້ປະກົດຕໍ່ໄຊໂລ (ກຈກ 9:1–7). ຫລັງຈາກອານາເນຍໄດ້ປິ່ນປົວຕາຂອງໄຊໂລໃຫ້ເຫັນໄດ້ອີກແລ້ວ, ໄຊໂລກໍໄດ້ຮັບບັບຕິສະມາ ແລະ ໄດ້ເລີ່ມຕົ້ນການປະຕິບັດສາດສະໜາກິດຂອງເພິ່ນ (ກຈກ 9:10–27).
7. **ອັນຕີໂອເຂຍ** (ໃນ ຊີເຣຍ) ຢູ່ບ່ອນນີ້ ສານຸສິດຖືກເອີ້ນວ່າ ຊາວຄຣິດສະຕຽນ ເປັນເທື່ອທຳອິດ (ກຈກ 11:26). ອາຄະໂບ ໄດ້ທຳນາຍເຖິງຄວາມອຶດຢາກ (ກຈກ 11:27–28). ການແຕກແຍກຢ່າງໃຫຍ່ໄດ້ເກີດຂຶ້ນທີ່ອັນຕີໂອເຂຍ ເລື່ອງພິທີຕັດ (ກຈກ 14:26–28; 15:1–9). ໃນອັນຕີໂອເຂຍ ໂປໂລໄດ້ເລີ່ມຕົ້ນ ການເຜີຍແຜ່ເທື່ອທີສອງຂອງເພິ່ນ ພ້ອມດ້ວຍຊີລາ, ບາຣະນາບາ, ແລະ ຢູດາ ບາຣະຊັບບາ (ກຈກ 15:22, 30, 35).
8. **ຕາໂຊ** ບ້ານເກີດຂອງໂປໂລ; ພວກອ້າຍນ້ອງໄດ້ສົ່ງໂປໂລມາບ່ອນນີ້ເພື່ອຊ່ວຍປົກປ້ອງຊີວິດເພິ່ນ (ກຈກ 9:29–30).
9. **ໄຊປຣັດ** ຫລັງຈາກໄດ້ຖືກຂົ່ມເຫັງ, ໄພ່ພົນຂອງພຣະເຈົ້າບາງຈຳນວນໄດ້ໜີມາຫາເກາະນີ້ (ກຈກ 11:19). ໂປໂລໄດ້ເດີນທາງຜ່ານໄຊປຣັດໄປ ຕອນເພິ່ນໄປເຜີຍແຜ່ເທື່ອທຳອິດຂອງເພິ່ນ (ກຈກ 13:4–5), ຕໍ່ມາບາຣະນາບາ ແລະ ມາຣະໂກ ກໍໄດ້ເຮັດແນວນີ້ຄືກັນ (ກຈກ 15:39).
10. **ປາໂຟ** ໂປໂລໄດ້ສາບແຊ່ງໝໍເວດມົນຄາຖາຢູ່ບ່ອນນີ້ (ກຈກ 13:6–11).
11. **ເດຣະເບ** ໂປໂລ ແລະ ບາຣະນາບາໄດ້ສັ່ງສອນພຣະກິດຕິຄຸນ ໃນເມືອງນີ້ (ກຈກ 14:6–7, 20–21).
12. **ລີສະຕຣາ** ເມື່ອໂປໂລໄດ້ປິ່ນປົວຄົນໜຶ່ງທີ່ເປັນເປ້ຍແລ້ວ, ເພິ່ນກັບບາຣະນາບາໄດ້ຖືກຍ້ອງຍໍວ່າເປັນເທບພຣະເຈົ້າ. ໂປໂລໄດ້ຖືກແກວ່ງກ້ອນຫີນໃສ່ ແລະ ຜູ້ຄົນຄິດວ່າເພິ່ນໄດ້ຕາຍແລ້ວ ແຕ່ເພິ່ນໄດ້ຟື້ນຂຶ້ນມາ ແລະ ໄດ້ສັ່ງສອນຕໍ່ໄປ (ກຈກ 14:6–21). ບ້ານຂອງຕີໂມທຽວ (ກຈກ 16:1–3).
13. **ອີໂກນີອົມ** ໃນການໄປເຜີຍແຜ່ເທື່ອທຳອິດຂອງພວກເພິ່ນ, ໂປໂລກັບບາຣະນາບາ ໄດ້ສັ່ງສອນຢູ່ບ່ອນນີ້ ແລະ ໄດ້ຖືກຂົ່ມຂູ່ວ່າຈະແກວ່ງກ້ອນຫີນໃສ່ພວກເພິ່ນ (ກຈກ 13:51–14:7).
14. **ລາວດີເກອາ ແລະ ໂກໂລຊາຍ** ລາວດີເກອາເປັນສາຂາແຫ່ງໜຶ່ງຂອງສາດສະໜາຈັກ ທີ່ໂປໂລໄດ້ໄປຢ້ຽມຢາມ ແລະ ໄດ້ຮັບຈົດໝາຍຈາກ (ກລຊ 4:16). ມັນຍັງເປັນເມືອງໜຶ່ງ ໃນຈຳນວນເຈັດເມືອງ ທີ່ລະບຸໄວ້ໃນ ໜັງສືພຣະນິມິດ (ເມືອງອື່ນໆແມ່ນ ເອເຟໂຊ, ຊະມີນາ, ເປຄາໂມ, ທົວເຕຣາ, ຊາເດ, ແລະ ຟີລາແດວເຟຍ; ເບິ່ງ ພນມ 1:11). ໂກໂລຊາຍຢູ່ຫ່າງໄປທາງຕາເວັນອອກຂອງລາວດີເກອາ ປະມານ 18 ກິໂລແມັດ. ໂປໂລໄດ້ຂຽນເຖິງໄພ່ພົນຂອງພຣະເຈົ້າ ຜູ້ອາໄສຢູ່ບ່ອນນີ້.
15. **ອັນຕີໂອເຂຍ (ໃນ ປີຊີເດຍ)** ໃນການໄປເຜີຍແຜ່ເທື່ອທຳອິດຂອງພວກເພິ່ນ, ໂປໂລກັບບາຣະນາບາ ໄດ້ສອນຊາວຢິວວ່າ ພຣະຄຣິດມາຈາກຕະກຸນຂອງດາວິດ. ໂປໂລໄດ້ມອບພຣະກິດຕິຄຸນໃຫ້ຊາວອິດສະຣາເອນ, ແລ້ວໃຫ້ຄົນຕ່າງຊາດ. ໂປໂລກັບບາຣະນາບາໄດ້ຖືກຂົ່ມເຫັງ ແລະ ຖືກຂັບໄລ່ (ກຈກ 13:14–50).
16. **ມີເລໂຕ** ໃນຂະນະທີ່ເພິ່ນໄປເຜີຍແຜ່ເທື່ອທີສາມຂອງເພິ່ນ, ໂປໂລໄດ້ເຕືອນພວກຜູ້ເຖົ້າແກ່ຂອງສາດສະໜາຈັກວ່າ ຈະມີ "ຝູງໝາໃນທີ່ຮ້າຍກາດ" ເຂົ້າມາໃນທ່າມກາງເຂົາເຈົ້າ (ກຈກ 20:29–31).
17. **ປັດໂມ** ໂຢຮັນໄດ້ຖືກຈັບເຂົ້າຄຸກ ຢູ່ໃນເກາະນີ້ ຕອນເພິ່ນໄດ້ຮັບພາບນິມິດ ຊຶ່ງຕອນນີ້ບັນຈຸຢູ່ໃນ ໜັງສືພຣະນິມິດ (ພນມ 1:9).
18. **ເອເຟໂຊ** ອາໂປໂລໄດ້ສັ່ງສອນຢູ່ບ່ອນນີດ້ວຍພະລັງ (ກຈກ 18:24–28). ໂປໂລ, ຕອນໄປເຜີຍແຜ່ເທື່ອທີສາມຂອງເພິ່ນ, ໄດ້ສອນຢູ່ໃນເມືອງເອເຟໂຊ ເປັນເວລາສອງປີ, ໄດ້ປ່ຽນໃຈຫລາຍຄົນ (ກຈກ 19:10, 18). ຢູ່ບ່ອນນີ້ ເພິ່ນໄດ້ມອບຂອງປະທານແຫ່ງພຣະວິນຍານບໍລິສຸດ ໂດຍການວາງມື (ກຈກ 19:1–7) ແລະ ໄດ້ເຮັດສິ່ງມະຫັດສະຈັນຫລາຍຢ່າງ, ລວມທັງການຂັບໄລ່ຜີມານຮ້າຍ (ກຈກ 19:8–21). ຢູ່ບ່ອນນີ້ ຜູ້ທີ່ນະມັດສະການພຣະອາເຕມາ ໄດ້ສ້າງຄວາມບໍ່ສະຫງົບຕໍ່ຕ້ານໂປໂລ (ກຈກ 19:22–41). ພາກສ່ວນໜຶ່ງຂອງ ໜັງສືພຣະນິມິດ ໄດ້ຂຽນເຖິງສາດສະໜາຈັກ ທີ່ເມືອງເອເຟໂຊ (ພນມ 1:11).
19. **ໂທອາດ** ໃນຂະນະທີ່ໂປໂລຢູ່ບ່ອນນີ້ ໃນການເດີນທາງເຜີຍແຜ່ເທື່ອທີສອງຂອງເພິ່ນ, ເພິ່ນໄດ້ເຫັນພາບນິມິດ ກ່ຽວກັບຊາຍມາເກໂດເນຍຄົນໜຶ່ງ ຂໍຄວາມຊ່ວຍເຫລືອ (ກຈກ 16:9–12). ໃນຂະນະທີ່ເພິ່ນຢູ່ໃນການເຜີຍແຜ່ເທື່ອທີສາມຂອງເພິ່ນ, ໂປໂລໄດ້ໂຜດຢູຕີໂຂໃຫ້ເປັນຄືນມາມີຊີວິດ (ກຈກ 20:6–12).
20. **ຟີລິບປອຍ** ໂປໂລ, ຊີລາ, ແລະ ຕີໂມທຽວ ໄດ້ປ່ຽນໃຈຜູ້ຍິງຄົນໜຶ່ງຊື່ວ່າລີເດຍ, ໄດ້ຂັບໄລ່ຜີມາຮ້າຍ, ແລະ ໄດ້ຖືກຂັງນຕີ (ກຈກ 16:11–23). ພວກເພິ່ນໄດ້ຮັບຄວາມຊ່ວຍເຫລືອຈາກສະຫວັນ ເພື່ອໃຫ້ພົ້ນອອກຈາກຄຸກ (ກຈກ 16:23–26).
21. **ອາແຖນ** ໃນຂະນະທີ່ໂປໂລຢູ່ໃນການເຜີຍແຜ່ເທື່ອທີສອງຂອງເພິ່ນ ທີ່ອາແຖນ, ເພິ່ນໄດ້ສິດສອນ ຢູ່ທີ່ປະຊຸມຂອງສະພາ (ເອເລໂອປາໂຂ) ກ່ຽວກັບ "ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ" (ກຈກ 17:22–34).
22. **ໂກຣິນໂທ** ໂປໂລໄດ້ໄປເມືອງໂກຣິນໂທໃນການເຜີຍແຜ່ເທື່ອທີສອງຂອງເພິ່ນ, ບ່ອນທີ່ເພິ່ນໄດ້ພັກເຊົານຳ ອາກີລາ ແລະ ປີຊະກີລາ. ເພິ່ນໄດ້ສັ່ງສອນຢູ່ບ່ອນນີ້ ແລະ ໄດ້ໃຫ້ບັບຕິສະມາຫລາຍຄົນ (ກຈກ 18:1–18). ຈາກໂຄຣິນໂທ, ໂປໂລໄດ້ຂຽນສານເຖິງຊາວໂຣມ.
23. **ເທສະໂລນິກ** ໂປໂລໄດ້ສັ່ງສອນຢູ່ບ່ອນນີ້ ລະຫວ່າງການເດີນທາງເຜີຍແຜ່ເທື່ອທີສອງຂອງເພິ່ນ. ກຸ່ມເຜີຍແຜ່ຂອງເພິ່ນໄດ້ອອກເດີນທາງໄປເມືອງເບເຣຍ ຫລັງຈາກຊາວຢິວໄດ້ສ້າງຄວາມເດືອດຮ້ອນໃຫ້ແກ່ພວກເພິ່ນ (ກຈກ 17:1–10).
24. **ເບເຣຍ** ໂປໂລ, ຊີລາ, ແລະ ຕີໂມທຽວ ໄດ້ພົບເຫັນຫລາຍຄົນທີ່ມີຈິດໃຈສູງສົ່ງ ໃນລະຫວ່າງການເດີນທາງເຜີຍແຜ່ເທື່ອທີສອງຂອງໂປໂລ. ຊາວຢິວຈາກເມືອງເທສະໂລນິກໄດ້ຕິດຕາມມາ ແລະ ໄດ້ຂົ່ມເຫັງພວກເພິ່ນ (ກຈກ 17:10–13).
25. **ມາເກໂດເນຍ** ໂປໂລໄດ້ສອນຢູ່ບ່ອນນີ້ ໃນລະຫວ່າງການເດີນທາງເທື່ອທີສອງ ແລະ ທີສາມຂອງເພິ່ນ (ກຈກ 16:9–40; 19:21). ໂປໂລໄດ້ສັນລະເສີນຄວາມເພື່ອແຜ່ຂອງໄພ່ພົນຂອງພຣະເຈົ້າຢູ່ແຂວງມາເກໂດເນຍ, ຜູ້ໄດ້ຄ້ຳຈູນເພິ່ນ ແລະ ໄພ່ພົນທີ່ຍາກຈົນຂອງພຣະເຈົ້າ ທີ່ເຢຣູຊາເລັມ (ໂຣມ 15:26; 2 ກຣທ 8:1–5; 11:9).
26. **ເມລີຕາ** ໂປໂລໄດ້ປະສົບກັບ ເຮືອຫລົ້ມຢູ່ເກາະບ່ອນນີ້ ໃນລະຫວ່າງທາງໄປກຸງໂຣມ (ກຈກ 26:32; 27:1, 41–44). ເພິ່ນບໍ່ໄດ້ຮັບອັນຕະລາຍຈາກການຖືກງູກັດ ແລະ ໄດ້ປິ່ນປົວຫລາຍຄົນທີ່ເຈັບປ່ວຍຢູ່ ເມລີຕາ (ກຈກ 28:1–9).
27. **ໂຣມ** ໂປໂລໄດ້ສັ່ງສອນຢູ່ບ່ອນນີ້ເປັນເວລາສອງປີ ໃນເຮືອນທີ່ເພິ່ນຖືກສັ່ງຫ້າມບໍ່ໃຫ້ອອກໄປຈາກບໍລິເວນບ້ານ (ກຈກ 28:16–31). ເພິ່ນກໍໄດ້ຂຽນສານ, ຫລື ຈົດໝາຍ, ເຖິງຊາວເອເຟໂຊ, ຊາວຟີລິບປອຍ, ແລະ ຊາວໂກໂລຊາຍ ແລະ ເຖິງຕີໂມທຽວ ແລະ ຟີເລໂມນ ໃນຂະນະທີ່ຢູ່ໃນຄຸກ ຢູ່ກຸງໂຣມ. ເປໂຕ ໄດ້ຂຽນສານສະບັບທຳອິດຈາກ "ບາບີໂລນ," ຊຶ່ງອາດເປັນກຸງໂຣມ, ບໍ່ດົນຫລັງຈາກເນໂຣໄດ້ຂົ່ມເຫັງຊາວຄຣິດສະຕຽນໃນ ຄ.ສ. 64. ເຊື່ອກັນທົ່ວໄປວ່າ ເປໂຕ ແລະ ໂປໂລ ໄດ້ຖືກຂ້າຍ້ອນຄວາມເຊື່ອຢູ່ບ່ອນນີ້.

## 14. ຄວາມສູງຂອງແຜ່ນດິນສັກສິດ




*ໜ້າພື້ນທີ່ພູມີປະເທດໄດ້ຖືກຂະຫຍາຍ ເພື່ອໃຫ້ເຫັນຄວາມແຕກຕ່າງຂອງລະດັບຄວາມສູງຢ່າງແຈ່ມແຈ້ງ.

## ດັດຊະນີແຜນທີ່ຂອງສະໄໝພຣະຄຣິສຕະທຳຄຳພີ

ດັດຊະນີແຜນທີ່ ສາມາດຊ່ວຍທ່ານພົບເຫັນສະຖານທີ່ແຕ່ລະແຫ່ງຢູ່ໃນແຜນທີ່. ແຕ່ລະສະຖານທີ່ແມ່ນຮ່ວມດ້ວຍເລກແຜນທີ່ ຊຶ່ງຕິດຕາມດ້ວຍຂໍ້ອ້າງອີງໃນເສັ້ນຕັດກັນຢູ່ເທິງແຜນທີ່ ທີ່ປະກອບດ້ວຍ ຕົວອັກສອນ ແລະ ຕົວເລກ. ຕົວຢ່າງເຊັ່ນ, ສະຖານທີ່ສຳລັບ ຣັບບາ (ອຳມານ) ຢູ່ໃນແຜນທີ່ໜ້າທຳອິດ ລະບຸໄວ້ວ່າ 1:ງ5—ນັ້ນຄື, ແຜນທີ່ 1, ໃນມຸມສາກ ງ5. ທ່ານສາມາດຊອກຫາມຸມສາກໃດໜຶ່ງໂດຍສະເພາະໄດ້ ຢູ່ໃນແຜນທີ່ ໂດຍການປະສານສົ້ນເທິງ ແລະ ທາງຂ້າງຂອງແຜນທີ່ເຂົ້າກັນ. ຊື່ອື່ນອີກຂອງສະຖານທີ່ ໄດ້ຖືກລະບຸໄວ້ຢູ່ໃນວົງເລັບ; ຍົກຕົວຢ່າງ, ຣັບບາ (ອຳມານ). ເຄື່ອງໝາຍຄຳຖາມ ຢູ່ທາງຫລັງຊື່ ເປັນການບອກວ່າ ສະຖານທີ່ ຊຶ່ງສະແດງໄວ້ຢູ່ໃນແຜນທີ່ ອາດເປັນໄປໄດ້ ຫລື ອາດຈະເປັນບ່ອນດັ້ງເດີມ ແຕ່ຍັງບໍ່ແນ່ນອນ.

ກະນີໂດ, 13:ຈ2
ກະເຣເຕ (ກາຟະໂຕ), ເກາະ, 8:ຄ3, 9:ກ3, 13:ຈ3
ກັກເກມິດ, 5:ຂ2, 6:ຂ2, 9:ງ2
ກາສາ, 1:ກ6, 2:ຄ1, 3:ກ6, 4:ກ4, 10:ກ7, 11:ກ7, 13:ຍ4
ກາຍຊາເຣຍ, 11:ຂ4, 13:ຍ3
ກາຍຊາເຣຍ ຟີລິບປອຍ, 11:ຄ2
ກາດາຣາ, 11:ຄ4
ກາເດັດ-ບາກເນອາ, 2:ຄ2, 3:ກ8, 4:ກ6
ກາດ, 3:ກ6, 4:ຂ4, 10:ກ6
ກາດ, ເຜົ່າ, 3:ຄ5
ກາດເຣເຟ, 10:ຂ3
ການາ, 11:ຄ3
ການາອານ, ພາກພື້ນ, 2:ຄ1, 9:ງ3
ກາເປໂດເກຍ, ພາກພື້ນ, 13:ຍ2
ກາເປນາອູມ, 11:ຄ3
ກາຟະໂຕ (ກະເຣເຕ), ເກາະ, 9:ກ3
ກາເມນ, ພູ, 1:ຂ3, 3:ຂ3, 4:ຂ2, 10:ຂ3, 11:ຂ3
ກາຍະຟາ, ເຮືອນຂອງ, ໃນເຢຣູຊາເລັມ, 12:ຂ6
ກາອູກາຊັດ, ພູ, 5:ຄ1, 8:ງ2, 9:ສ1
ກາອູນ, ພາກພື້ນ, 8:ກ1
ກິດຕິມ (ໄຊປຣັດ), ເກາະ, 9:ຄ3
ກິນການ, 1:ຄ5, 2:ງ1, 4:ຄ4
ກິນເນເຣດ, ທະເລ (ຄາລິເລ), 1:ຄ3, 3:ຄ2, 4:ຄ2, 9:ງ3, 10:ຄ3, 11:ຄ3
ກິນໂບອາ, ພູ, 1:ຄ4, 3:ຄ3, 10:ຄ4, 11:ຄ4, 14:ຄ6
ກິຣະເຣເຣັດ, 10:ຄ7
ກີຊີໂອນ, ແມ່ນ້ຳ, 1:ຂ3, 10:ຂ3, 11:ຂ3
ກີເບອາ, 4:ຄ4
ກີເບໂອນ, 10:ຂ5
ກີລີເກຍ, ພາກພື້ນ, 13:ຊ2
ກີເລອາດ, ພາກພື້ນ, 1:ຄ4, 10:ຄ4
ກີເຣເນ, 13:ງ3
ເກຊູ, ພາກພື້ນ, 4:ຄ2
ເກເຊ, 4:ຂ4
ເກຣາ, 10:ກ7
ເກຣາ, ແມ່ນ້ຳ, 1:ກ7, 10:ກ7, 11:ກ7
ເກຣີຊິມ, ພູ, 1:ຂ5, 3:ຂ4, 4:ຄ3, 10:ຂ5, 11:ຂ5, 14:ຂ6
ໂກເຊັນ, ພາກພື້ນ, 2:ກ2, 9:ຄ4
ໂກໂມຣາ, ເຂດຂອງໂຊໂດມ ແລະ, 10:ຄ8
ໂກຣິນໂທ, 13:ງ2
ກຣີກ, 7:ກ2

ຂີໂອ, ເກາະ, 13:ຈ2
ເຂດພູດອຍຢູດາຍ, 14:ຂ2
ໂຂຣາຊິນ, 11:ຄ3

ຄາດເທດ, 8:ຂ3
ຄາລາເຕຍ, ພາກພື້ນ, 13:ຊ1
ຄາລິເລ, ທາງໃຕ້, ພາກພື້ນ, 1:ຄ3
ຄາລິເລ, ທະເລ (ກິນເນເຣດ), 1:ຄ3, 3:ຄ2, 4:ຄ2, 9:ງ3, 10:ຄ3, 11:ຄ3, 14:ຂ7
ຄາລິເລ, ທາງເໜືອ, ພາກພື້ນ, 1:ຄ2
ຄາລິເລ, ພາກພື້ນ, 11:ຄ3
ຄ້າຍພັກໃນຖິ່ນແຫ້ງແລ້ງກັນດານ, 2:ຄ4
ເຄັດເຊມາເນ, ສວນ, ໃນເຢຣູຊາເລັມ, 12:ງ4
ໂຄລະໂຄທາ, ໃນເຢຣູຊາເລັມ, 12:ຂ3

ງາມ, ທ່າ, 13:ຈ3

ຈັກກະພົບ ບາບີໂລນ, ໃໝ່, 6:ຂ3
ຈັກກະພົບ ປາເຊຍ, 8:ງ3
ຈັກກະພົບ ມີດີອານ, 6:ງ3
ຈັກກະພົບ ອັດຊີເຣຍ, 5:ຄ3
ແຈແຫລມຊີນາຍ, 2:ຄ3
ເຈີມານີ, ພາກພື້ນ, 8:ຂ1

ສະນ້ຳງູໃຫຍ່, ໃນເຢຣູຊາເລັມ, 12:ກ6
ສະນ້ຳທໍສູງ, ໃນເຢຣູຊາເລັມ, 12:ຂ5
ສະປາຕາ, 6:ກ2, 7:ກ2
ສາລາສາມຫລັງ, 13:ຂ1
ສີກລັກ, 4:ຂ5
ສິນ, ຖິ່ນແຫ້ງແລ້ງກັນດານ, 2:ຄ2
ສີພາລາ, 1:ຂ6, 10:ຂ6, 14:ຂ2
ເສບູໂລນ, ເຜົ່າ, 3:ຂ3
ເສເຣັດ, ແມ່ນ້ຳ, 1:ຄ8, 2:ງ2, 3:ຄ8, 4:ຄ5, 10:ຄ8, 11:ຄ8
ສວນອຸບມຸງ, ໃນເຢຣູຊາເລັມ, 12:ຂ3

ຊະມີນາ, 13:ຈ2
ຊາມາຕີ, ພາກພື້ນ, 8:ຄ1
ຊາມາເຣຍ, 1:ຂ4, 5:ຂ3, 10:ຂ4, 11:ຂ5, 13:ຍ3

ຊາມາເຣຍ, ເສັ້ນທາງໄປຫາ, 12:ຂ1
ຊາມາເຣຍ, ພາກພື້ນ, 1:ຂ4, 10:ຂ4, 11:ຂ4
ຊາໂມຕາເກ, ເກາະ, 13:ຈ1
ຊາລາມີ, 13:ຊ3
ຊາລິມ, 11:ຄ4
ຊາເລັມ (ເຢຣູຊາເລັມ), 9:ງ3
ຊາເຣັບຕາ, 11:ຂ1
ຊາໂຣນ, ທົ່ງພຽງ, 1:ຂ4, 10:ຂ4, 11:ຂ5
ຊາວອິດສະຣາເອນ, ສະນ້ຳຂອງ, ໃນເຢຣູຊາເລັມ, 12:ຄ4
ຊາວຮີວີ, ປະຊາຊົນ, 3:ຄ1
ຊິນ, ຖິ່ນແຫ້ງແລ້ງກັນດານ, 2:ຄ3
ຊີຂາ, 11:ຂ5
ຊີເຄມ, 3:ຂ4, 4:ຄ3, 10:ຂ4
ຊີໂດນ, 1:ຄ1, 9:ງ3, 10:ຂ1, 11:ຂ1, 13:ຍ3
ຊີນາ (ບາເບນ), 9:ຊ3
ຊີນາຍ, ພູ (ໂຮເຣັບ), 2:ຄ4, 9:ງ4
ຊີເມໂອນ, ເຜົ່າ, 3:ກ7
ຊີໂລ, 3:ຂ5, 4:ຄ3, 10:ຄ5
ຊີໂລອາມ, ສະນ້ຳ, ໃນເຢຣູຊາເລັມ, 12:ຄ7
ຊີຣະກູ, 13:ຂ2
ຊີເຣຍ, ພາກພື້ນ, 6:ຂ3, 8:ຄ3, 9:ງ3, 11:ຄ2, 13:ຍ3
ຊີໂອນ, ພູ, 14:ຂ6
ຊຸກໂກດ, ໃນອິດສະຣາເອນ, 3:ຄ4, 4:ຄ3
ຊຸກໂກດ, ໃນເອຢິບ, 2:ຂ2
ຊູຊາ, 6:ຄ3, 7:ຂ3, 9:ຊ3
ຊູດ, ອ່າວ, 2:ຂ4
ຊູເຣ, ຖິ່ນແຫ້ງແລ້ງກັນດານ, 2:ຄ2
ໂຊໂດມ ແລະ ໂກໂມຣາ, ເຂດຂອງ, 10:ຄ8
ໂຊເຣັກ, ແມ່ນ້ຳ, 1:ຂ6, 10:ກ6, 11:ກ6
ໄຊປຣັດ (ກິດຕິມ), ເກາະ, 8:ຄ3, 9:ຄ3, 13:ຊ3

ດາຊີ, ພາກພື້ນ, 8:ຄ2
ດານ, ເຜົ່າ, 3:ຄ1, 3:ກ5
ດານ (ລາອິດ), 1:ຄ2, 3:ຄ1, 4:ຄ1, 10:ຄ2
ດາມັສກັດ, 1:ງ1, 9:ງ3, 10:ງ1, 11:ງ1, 13:ຍ3
ດີໂບນ, 2:ງ1
ດຸຣາ, ທົ່ງພຽງ, 9:ສ3
ເດກາໂປລີ, ພາກພື້ນ, 11:ງ4
ເດຣະເບ, 13:ຊ2
ໂດທານ, 10:ຂ4
ໂດບຟະກາ, 2:ຄ4
ໂດເຣ, 3:ຂ3, 4:ຂ2

ຕາໂຊ, 13:ຊ2
ຕານິດ (ຣາມາເຊັດ), 2:ຂ2
ຕາໂບເຣ, ພູ, 1:ຄ3, 3:ຄ3, 4:ຄ2, 10:ຄ3, 11:ຄ3, 14:ຄ6
ຕີກຣິດ, ແມ່ນ້ຳ, 5:ຄ2, 6:ຄ2, 8:ງ3, 9:ຊ3
ຕີເບັດ, 5:ຂ4, 6:ຂ4, 7:ກ4, 8:ຄ4
ຕີເບເຣຍ, 11:ຄ3
ຕີເຣ, 1:ຂ2, 3:ຂ1, 4:ຂ1, 9:ງ3, 10:ຂ1, 11:ຂ2, 13:ຍ3
ເຕກົວ, 10:ຂ6

ຖິ່ນແຫ້ງແລ້ງກັນດານຊີນາຍ, 2:ຄ4
ຖິ່ນແຫ້ງແລ້ງກັນດານພາກຕາເວັນອອກ, 2:ງ2

ທະເລເກືອ (ທະເລຕາຍ), 1:ຄ7, 2:ງ1, 3:ຄ6, 4:ຄ4, 9:ງ4
ທະເລຄາສະປຽນ, 5:ຄ1, 6:ຄ2, 7:ຂ2, 8:ງ2, 9:ຊ1
ທະເລຊາຍລີເບຍ, 9:ຂ4
ທະເລຊາຍອາຣາເບຍ, 9:ສ3
ທະເລແດງ, 2:ງ4, 5:ຂ4, 6:ຂ4, 7:ຂ4, 8:ຄ4, 9:ງ4
ທະເລດຳ, 5:ຂ1, 6:ຂ1, 7:ຂ2, 8:ຄ2, 9:ຄ1, 13:ສ1
ທະເລຕາຍ, ຄວາມສູງຂອງ, 14:ກ7, 14:ຄ3
ທະເລຕາຍ, ເສັ້ນທາງໄປຫາ, 12:ຄ8
ທະເລຕາຍ (ທະເລເກືອ), 1:ຄ7, 2:ງ1, 3:ຄ6, 4:ຄ4, 9:ງ4, 10:ຄ6, 11:ຄ7, 14:ກ7, 14:ຄ3
ທະເລຕາຍ, ພື້ນຂອງ, 14:ຄ3
ທະເລທາງໃຕ້ (ທະເລພາກຕາເວັນອອກ, ອ່າວເປີເຊຍ), 5:ຄ4, 6:ຄ4, 7:ຂ4, 8:ງ4, 9:ຍ3
ທະເລທາງເໜືອ (ທະເລໃຫຍ່, ເມດີແຕຣາເນ), 7:ກ3, 9:ຂ3
ທະເລພາກຕາເວັນອອກ (ທາງໃຕ້), 5:ຄ4, 6:ຄ4
ທະເລເມດີແຕຣາເນ, ຄວາມສູງຂອງ, 14:ກ2, 14:ກ6
ທະເລໃຫຍ່ (ເມດີແຕຣາເນ, ທາງເໜືອ), 1:ກ4, 2:ຂ1, 3:ກ3, 4:ກ3, 5:ກ3, 6:ກ3, 9:ຂ3, 10:ກ4, 11:ກ5, 14:ກ2, 14:ກ6
ທະເລອາຣານ, 5:ງ1, 6:ງ1, 7:ຄ2
ທະເລອາຣາເບຍ, 6:ງ4
ເທສະໂລນິກ, 8:ຄ2, 13:ງ1
ໂທອາດ, 13:ຈ2
ທຣານຈໍແດນ, ທົ່ງພຽງທີ່ຢູ່ບ່ອນສູງດ້ານຕາເວັນອອກ, 14:ງ2
ທຣອຍ, 6:ກ2, 7:ກ2, 9:ຂ2

ນາຊາເຣັດ, 1:ຄ3, 11:ຂ3
ນາບາເຕອາ, ພາກພື້ນ, 11:ຄ8
ນາອີນ, 11:ຄ4
ນິນ, ແມ່ນ້ຳ, 2:ກ4, 5:ຂ4, 6:ຂ4, 7:ກ4, 8:ຄ4, 9:ຄ4
ນີເນເວ, 5:ຄ2, 9:ສ2
ນີເກ, ພາກພື້ນ, 1:ຂ8, 10:ຂ8
ເນັບທະລີ, ເຜົ່າ, 3:ຄ2
ເນໂບ, ພູ, 1:ຄ6, 2:ງ1, 3:ຄ6, 4:ຄ4, 10:ຄ6, 11:ຄ6
ໂນຟາ (ມຳຟິດ), 2:ກ3

ບະຣິຕານີ, ພາກພື້ນ, 8:ກ1
ບາຊານ, ພາກພື້ນ, 1:ງ2, 10:ຄ2
ບາບີໂລນ, 5:ຄ3, 6:ຄ3, 7:ຂ3, 9:ສ3
ບາບີໂລນ, ພາກພື້ນ, 9:ສ3
ບາເບນ (ຊີນາ), 9:ຊ3

ບີທີເນຍ, ພາກພື້ນ, 13:ສ1
ເບັດຊະທາ, ສະ, ໃນເຢຣູຊາເລັມ, 12:ຄ3
ເບັດຊານ, 3:ຄ3, 4:ຄ3, 10:ຄ4
ເບັດຊາອີດາ, 11:ຄ3
ເບັດທານີ, 11:ຂ6
ເບັດທານີ, ເສັ້ນທາງໄປຫາ, 12:ງ6
ເບັດທາບາຣາ, 11:ຄ6
ເບັດຟາເຄ, 11:ຂ6
ເບັດເລເຮັມ, 1:ຂ6, 3:ຂ6, 4:ຂ4, 10:ຂ6, 11:ຂ6
ເບັດເລເຮັມ, ເສັ້ນທາງໄປຫາ, 12:ກ7
ເບັດເອນ (ລູເຊ), 3:ຂ5, 4:ຄ4, 10:ຂ5, 11:ຂ6
ເບັນຢາມິນ, ເຜົ່າ, 3:ຂ5
ເບໂຊເຣ, ແມ່ນ້ຳ, 1:ກ7, 10:ກ7, 11:ກ8
ເບສະທາ, 12:ຂ3
ເບເຣຍ, 13:ງ1
ເບເອນເຊບາ, 1:ຂ7, 2:ຄ1, 3:ຂ7, 4:ຂ5, 9:ງ4, 10:ຂ7, 11:ກ8
ໂບສະຣາ, 4:ຄ6
ບໍ່ນ້ຳກີໂຮນ, ໃນເຢຣູຊາເລັມ, 12:ງ6
ບໍ່ນ້ຳເອນໂຣເກນ, 12:ຄ7

ປະຕູຄອກແກະ, ໃນເຢຣູຊາເລັມ, 12:ຄ4
ປະຕູງາມ, 12:ຄ4
ປະຕູຊູຊາ, ໃນເຢຣູຊາເລັມ, 12:ງ4
ປະຕູນ້ຳ, ໃນເຢຣູຊາເລັມ, 12:ຄ7
ປະຕູໜອງປາ, ໃນເຢຣູຊາເລັມ, 12:ຂ3
ປະໂຕເລມາຍ (ອັກໂຄ, ອັກໂກ), 1:ຂ3, 11:ຂ3, 13:ຍ3
ປັດໂມ, ເກາະ, 13:ຈ2
ປາດານ-ອາຣາມ (ຮາຣານ), 9:ຈ2
ປາໂຟ, 13:ຊ3
ປາຣານ, ຖິ່ນແຫ້ງແລ້ງກັນດານ, 2:ຄ3
ປີຊີເດຍ, ພາກພື້ນ, 13:ສ2
ປີທົມ, 2:ຂ2
ປີຮາຮີໂຣດ, 2:ຂ3
ເປກາ, 13:ສ2
ເປການຳ, 13:ຈ2
ເປນີເອນ, 10:ຄ4
ເປຣີອາ, 11:ຄ5
ປົນໂຕ, ພາກພື້ນ, 13:ຊ1
ໂປຕີໂອລີ, 13:ຂ1
ໂປນີເຊຍ, ພາກພື້ນ, 1:ຄ1, 4:ຂ1, 9:ງ3, 10:ຂ1, 11:ຂ2, 13:ຍ3
ເປີເຊຍ, 5:ງ4, 6:ງ4

ປຳຟີເລຍ, ພາກພື້ນ, 13:ສ2
ປ້ອມຍາມອັນໂຕນີ, ໃນເຢຣູຊາເລັມ, 12:ຄ3

ພູເລບານອນ, 1:ຄ1, 10:ຄ1, 11:ຄ1
ພຣະວິຫານ, ຂັ້ນໄດໄປສູ່, ໃນເຢຣູຊາເລັມ, 12:ງ5
ພຣະວິຫານ, ຍອດຂອງ, ໃນເຢຣູຊາເລັມ, 12:ງ5
ພຣະວິຫານ, ໃນເຢຣູຊາເລັມ, 12:ຄ4

ຟີເຄຍ, ພາກພື້ນ, 13:ສ2
ຟີລາແດວເຟຍ, 11:ງ6
ຟີລິດສະຕິນ, ທົ່ງພຽງ, 1:ກ6, 10:ກ6
ຟີລິດສະຕິນ, ປະຊາຊົນ, 2:ຄ2
ຟີລິດສະຕິນ, ພາກພື້ນ, 4:ຂ4
ຟີລິບປອຍ, 13:ງ1
ຟຣາປັກ, ແມ່ນ້ຳ, 1:ງ1, 10:ງ1, 11:ງ2

ມະຫານາອີມ, 10:ຄ5
ມັກດາລາ, 11:ຄ3
ມັນຕາ, ເກາະ, 13:ຂ3
ມາກາອີຣັດ, 11:ຄ7
ມາເກໂດເນຍ, ພາກພື້ນ, 7:ກ2, 8:ຄ2, 13:ງ1
ເມເດບາ, 4:ຄ4
ມານາເຊ, ເຜົ່າ, 3:ຂ4, 3:ງ2
ມາຣາ, 2:ຂ3
ມາເຣ ອິນເຕີນຳ (ທະເລໃຫຍ່, ເມດິແຕຣາເນ, ທາງເໜືອ), 8:ຂ3
ມີເຊຍ, ພາກພື້ນ, 13:ຈ1
ມີເຊນາອີ, 5:ກ2
ມີດີອານ, ພາກພື້ນ, 2:ງ4, 9:ຈ4
ມີເລໂຕ, 13:ຈ2
ມີຣາ, 13:ສ2
ເມກິດໂດ, 1:ຂ3, 3:ຂ3, 4:ຂ2, 6:ຂ3, 9:ງ3, 10:ຂ3
ເມໂຊໂປຕາເມຍ, 8:ງ3, 9:ຈ2
ເມດິແຕຣາເນ (ທະເລໃຫຍ່, ທາງເໜືອ), 1:ກ4, 2:ຂ1, 3:ກ3, 4:ກ3, 5:ກ3, 6:ກ3, 7:ກ3, 8:ຂ3, 9:ຂ3, 10:ກ4, 11:ກ5, 13:ງ3, 14:ກ2, 14:ກ6
ເມລິຕາ (ມັນຕາ), ເກາະ, 13:ຂ3
ແມ່ນ້ຳຈຳແດນ, 1:ຄ5, 2:ງ1, 3:ຄ5, 4:ຄ3, 10:ຄ5, 11:ຄ5
ແມ່ນ້ຳອິນດັດ, 7:ງ3
ໂມອາບ, ທົ່ງພຽງ, 1:ຄ6, 11:ຄ6
ໂມອາບ, ພາກພື້ນ, 1:ງ7, 2:ງ1, 3:ງ7, 4:ຄ5, 10:ງ7
ໂມຣີຢາ, ພູ, 14:ຂ6
ໂມເຣ, ຄ້ອຍພູ, 1:ຄ3, 10:ຄ3
ມຳຟີດ (ໂນຟາ), 2:ກ3, 5:ຂ4, 6:ຂ3, 7:ກ3, 8:ຄ3

ຢັບໂບກ, ແມ່ນ້ຳ, 1:ຄ5, 3:ງ4, 4:ງ3, 10:ຄ5, 11:ຄ5
ຢາດາ, ເຜົ່າ, 3:ກ6
ຢາເບັດ ກີເລອາດ, 3:ຄ4
ຢາມຸກ, ແມ່ນ້ຳ, 1:ຄ3, 10:ຄ3, 11:ຄ3
ຢູດາ, ພາກພື້ນ, 5:ຂ3, 10:ຂ7
ຢູດາຍ, ຖິ່ນແຫ້ງແລ້ງກັນດານ, 1:ຂ7, 11:ຂ7
ຢູດາຍ, ພາກພື້ນ, 1:ຂ6, 11:ຂ7
ເຢຊະເຣເອນ, 4:ຄ2, 10:ຂ4
ເຢຊະເຣເອນ (ເອສະດາອີໂລນ), ຮ່ອມພູ, 1:ຂ3, 10:ຂ3
ເຢຣີໂກ, 1:ຄ5, 2:ງ1, 3:ຄ5,

4:ຄ4, 10:ຄ6, 11:ຄ6, 14:ກ7, 14:ຄ3
ເຢຣິໂກ, ເສັ້ນທາງໄປຫາ, 12:ງ6
ເຢຣູຊາເລັມ (ຊາເລັມ), 1:ຂ6, 2:ງ1, 3:ຂ5, 4:ຄ4, 5:ຂ3, 6:ຂ3, 7:ກ3, 8:ຄ3, 9:ງ3, 10:ຂ6, 11:ຂ6, 13:ຍ3, 14:ຂ2, 14:ຂ6
ເຢຣູຊາເລັມ, ເມືອງທາງໃຕ້, 12:ຄ6
ເຢຣູຊາເລັມ, ເມືອງທາງເໜືອ, 12:ຂ6
ຢົບປາ, 1:ກ5, 3:ກ5, 4:ຂ3, 10:ກ5, 11:ກ5, 13:ຍ3
ຢົບປາ, ເສັ້ນທາງໄປຫາ, 12:ກ4

ຣັບບາ (ອຳມານ), 1:ງ5, 3:ງ5, 10:ງ5, 14:ງ2
ຣາມາເຊັດ (ຕານິດ), 2:ຂ2
ຣາໂມດ-ເກລີອາດ, 3:ງ3, 4:ຄ2
ຣູເບັນ, ເຜົ່າ, 3:ຄ6
ເຣຄີໂອມ, 13:ຂ2
ເຣພີດິມ, 2:ຄ4
ໂຣໂດ, ເກາະ, 9:ຂ3, 13:ຈ3
ໂຣມ, 8:ຂ2, 13:ກ1

ລະບຽງກະສັດ, ໃນເຢຣູຊາເລັມ, 12:ຄ5
ລະບຽງຂອງໂຊໂລໂມນ, ໃນເຢຣູຊາເລັມ, 12:ງ4
ລາກິດ, 1:ຂ6, 3:ຂ6, 4:ຂ4, 10:ຂ7
ລາວດີເກອາ, 13:ສ2
ລາອິດ (ດານ), 10:ຄ2
ລີຕານີ, ແມ່ນ້ຳ, 1:ຄ1, 10:ຄ1, 11:ຄ2
ລີເກຍ, ພາກພື້ນ, 13:ສ2
ລີສະຕຣາ, 13:ຊ2
ລີເດຍ, ພາກພື້ນ, 13:ຈ2
ລີເບຍ, 8:ຂ3, 13:ຄ4
ລູເຊ (ເບັດເອນ), 10:ຂ5

ວັງຂອງເຮໂຣດ, ໃນເຢຣູຊາເລັມ, 12:ຂ5
ວັງຮາສະໂມເນແອນ, ໃນເຢຣູຊາເລັມ, 12:ຄ5

ຫ້ອງຊັ້ນເທິງ, ໃນເຢຣູຊາເລັມ, 12:ຂ6

ໝາກກອກເທດ, ພູ, 1:ຂ6, 10:ຂ6, 11:ຂ6, 12:ງ5, 14:ຂ6

ຫລ່ງມນິນ, 2:ກ2, 9:ຄ4

ຫ້ວຍນ້ຳເມໂຣມ (ທະເລສາບຮູເລ), 10:ຄ2

ອະຂາຍາ, ແຂວງໂຣມ, 8:ຄ2, 13:ງ2
ອັກກາດ, ພາກພື້ນ, 9:ຊ2
ອັກໂກ (ອັກໂຄ, ປະໂຕເລມາຍ), 1:ຂ3, 3:ຂ2, 4:ຂ2, 10:ຂ2, 11:ຂ3
ອັກໂກບ, ພາກພື້ນ, 4:ຄ1
ອັດຊະໂດດ (ອາໄຊໂຕ), 1:ກ6, 3:ກ5, 4:ຂ4, 10:ກ6
ອັດຊີເຣຍ, 9:ສ2
ອັດຊູເຣ, 5:ຄ2, 9:ສ2
ອັດຣີ, ທະເລ (ອັດຣີຕິກ), 8:ຂ2
ອັນຕີໂອເຂຍ, ໃນຊີເຣຍ, 8:ຄ3, 13:ຍ2
ອັນຕີໂອເຂຍ, ໃນປີຊີເດຍ, 13:ສ2
ອາກໂນນ, ແມ່ນ້ຳ, 1:ຄ7, 2:ງ1, 3:ຄ6, 4:ຄ5, 10:ຄ7, 11:ຄ7
ອາກາບາ, ອ່າວ, 2:ງ4
ອາສະກາໂລນ (ອາສະເກໂລນ), 11:ກ6
ອາສະເກໂລນ (ອາສະກາໂລນ), 1:ກ6, 3:ກ6, 4:ກ4, 10:ກ6, 11:ກ6
ອາເຊ, ເຜົ່າ, 3:ຂ2
ອາໄຊໂຕ (ອັດຊະໂດດ), 11:ກ6
ອາແຖນ, 6:ກ2, 7:ກ2, 8:ຄ2, 13:ງ2
ອາບານາ, ແມ່ນ້ຳ, 1:ງ1
ອາບີເລັນ, ພາກພື້ນ, 11:ງ1
ອາປີໂອ, ຕະຫລາດ, 13:ຂ1
ອາມາເຫລັກ, ພາກພື້ນ, 4:ກ6
ອາເລັກຊັນເດຍ, 8:ຄ3, 13:ສ4
ອາຣັດ, 2:ງ1, 3:ຂ7, 4:ຂ5
ອາຣາບາ (ທ່ອມພູຣິບ), 1:ຄ8, 2:ງ2, 4:ຄ6, 10:ຄ8
ອາຣາເບຍ, 5:ຄ4, 8:ງ4
ອາຣາມດາມັສກັດ, ພາກພື້ນ, 4:ງ1
ອາຣາຣັດ, ພູ, 9:ສ1
ອາຣິມາທາຍ, 11:ຂ5
ອ່າວເປີເຊຍ (ທະເລທາງໃຕ້), 9:ຍ3
ອາອີ, 2:ງ1, 10:ຂ5
ອິດສະຣາເອນ, ພາກພື້ນ, 4:ຂ3
ອິດຊາຄາ, ເຜົ່າ, 3:ຄ3
ອີໂກນີອົມ, 13:ຊ2
ອີຕາລີ, ແຂວງໂຣມ, 8:ຂ2, 13:ກ1
ອູຣາຕູ, ພາກພື້ນ, 9:ຈ1
ອູເຣ, 5:ຄ3, 9:ຈ2, 9:ຊ3
ເອັກໂຣນ, 1:ຂ6, 10:ກ6
ເອເຊຍ, ແຂວງໂຣມ, 8:ຄ2, 13:ສ1
ເອໂດມ, ພາກພື້ນ, 1:ຄ8, 2:ງ2, 4:ຄ7, 10:ງ8
ເອສະດາອີໂລນ (ເຢຊະເຣເອນ), ຮ່ອມພູ, 1:ຂ3, 10:ຂ3
ເອຊີໂອນເກເບ, 2:ງ3, 4:ຂ8, 9:ງ4
ເອທາມ, ຖິ່ນແຫ້ງແລ້ງກັນດານ, 2:ຂ3
ເອນເກດີ, 4:ຄ4, 10:ຄ7
ເອນໂດເຣ, 10:ຄ3
ເອບານ, ພູ, 1:ຂ4, 3:ຂ4, 4:ຄ3, 10:ຂ4, 11:ຂ5, 14:ຂ6
ເອຟະຣາອິມ, ເຜົ່າ, 3:ຂ5
ເອເຟໂຊ, 8:ຄ2, 13:ຈ2
ເອມາອຸດ, 11:ຂ6
ເອມາອຸດ, ເສັ້ນທາງໄປຫາ, 12:ກ4
ເອຢິບ, ພາກພື້ນ, 2:ກ2, 5:ຂ4, 7:ກ4, 8:ຄ4, 9:ຄ4, 13:ສ4
ເອຢິບ, ແມ່ນ້ຳຂອງ, 2:ຄ2
ເອຢິບ, ອານາຈັກຂອງ, 6:ກ3

ເອລາ, 1:ຂ6, 10:ກ6, 11:ກ6
ເອລາມ, ພາກພື້ນ, 5:ຄ3, 6:ຄ3, 7:ຄ3, 9:ຍ3
ເອລີມ, 2:ຄ3
ເອີຟຣັດ, ແມ່ນໍ້າ, 5:ຂ3, 6:ຂ3, 8:ງ3, 9:ຈ2
ໄອດູມີອາ, ພາກພື້ນ, 1:ຂ8, 10:ຂ8, 11:ຂ7
ໄອນົນ, 11:ຄ4
ໄອຢາໂລນ, 1:ຂ5, 10:ຂ5, 11:ຂ5
ອຳມານ (ຣັບບາ), 1:ງ5, 10:ງ5, 14:ງ2
ອຳໂມນ, ພາກພື້ນ, 1:ງ6, 3:ງ5, 4:ງ3, 10:ງ6
ອອນ (ເຮລີໂອໂປລິດ), 2:ກ3, 9:ຄ4

ຮາໂຊ, 3:ຄ2, 4:ຄ2, 10:ຄ2
ຮາຣານ (ປາດານ-ອາຣາມ), 9:ຈ2
ຮິສະປານີ, ພາກພື້ນ, 8:ກ2
ຮິດຕີ, ປະຊາຊົນ, 9:ງ2
ຮູໃຕ້ດິນຂອງເຮເຊກີຢາ, ໃນເຢຣູຊາເລັມ, 12:ຄ6
ຮູເລ (ຫ້ວຍນໍ້າເມໂຣມ), ທະເລສາບ, 10:ຄ2, 14:ຄ6
ເຮັດຊະໂບນ, 4:ຄ4
ເຮັບໂຣນ, 1:ຂ6, 2:ງ1, 3:ຂ6, 4:ຂ4, 10:ຂ7, 11:ຂ7
ເຮັບໂຣນ, ເສັ້ນທາງໄປຫາ, 12:ກ7
ເຮລີໂອໂປລິດ (ອອນ), 2:ກ3
ໂຮຣີ, ປະຊາຊົນ, 9:ຈ2
ໂຮເຣ, ພູ, 2:ງ2
ໂຮເຣັບ (ພູຊີນາຍ), 2:ຄ4, 9:ງ4
ເຮີໂມນ, ພູ, 1:ງ1, 3:ຄ1, 4:ຄ1, 10:ຄ1, 11:ຄ1, 14:ງ5
ຮ່ອມພູກິດໂຣນ, ໃນເຢຣູຊາເລັມ, 12:ງ6
ຮ່ອມພູຮິນໂນມ, ໃນເຢຣູຊາເລັມ, 12:ຂ7
ຮ່ອມພູຮູເລ, 1:ຄ2, 11:ຄ2

# ຮູບພາບຂອງສະໄໝພຣະຄຣິສຕະທຳຄຳພີ

ຮູບພາບສະຖານທີ່ ທີ່ສຳຄັນເຫລົ່ານີ້ໃຫ້ຕົວຢ່າງເຖິງແຜ່ນດິນບ່ອນທີ່ພຣະເຢຊູເຄີຍໄດ້ຍ່າງ, ບ່ອນທີ່ສາດສະດາໃນສະໄໝພຣະຄຣິສຕະທຳຄຳພີໄດ້ອາໄສຢູ່ ແລະ ໄດ້ສອນ, ແລະ ເປັນບ່ອນທີ່ເຫດການຫລາຍຢ່າງໃນພຣະຄຳພີ ໄດ້ເກີດຂຶ້ນ.

**ສະຫລຸບ**

ແຜນທີ່ຂ້າງລຸ່ມນີ້ ສະແດງສະຖານທີ່ຂອງຮູບພາບ ຢູ່ໃນພາກນີ້. ຢູ່ໃນໜ້າຕໍ່ໆໄປ, ຮູບທີ່ໝາຍເລກໄວ້ ມີຖ້ອຍຄຳອະທິບາຍສະຖານທີ່ຕິດຢູ່ນຳ. ເຫດການທີ່ສຳຄັນໃນພຣະຄຳພີ ຈາກເຂດນັ້ນ ຖືກລະບຸໄວ້, ພ້ອມດ້ວຍຂໍ້ອ້າງອີງພຣະຄຳພີ ເພື່ອວ່າທ່ານຈະຮູ້ຈັກບ່ອນທີ່ທ່ານສາມາດອ່ານກ່ຽວກັບເຫດການເຫລົ່ານີ້ໄດ້.

1. ແມ່ນ້ຳນິນ ແລະ ເອຢິບ
2. ພູຊີນາຍ (ໂຮເຣັບ) ແລະ ຖິ່ນແຫ້ງແລ້ງກັນດານຊີນາຍ
3. ຖິ່ນແຫ້ງແລ້ງກັນດານຢູດາຍ
4. ກາເດັດ-ບາກເນອາ
5. ອຸບມຸງຂອງປິຕຸ
6. ເຂດພູດອຍຢູດາຍ
7. ເບັດເລເຮັມ
8. ເຢຣູຊາເລັມ
9. ພຣະວິຫານຂອງເຮໂຣດ
10. ຂັ້ນໄດໄປສູ່ພຣະວິຫານ
11. ພູໝາກກອກເທດ
12. ສວນເຄັດເຊມາເນ
13. ໂຄລະໂຄທາ
14. ສວນອຸບມຸງ
15. ເຢຣິໂກ
16. ຊີໂລ
17. ຊີເຄມ
18. ໂດທານ ໃນຊາມາເຣຍ
19. ກາຍຊາເຣຍ ແລະ ທົ່ງພຽງຊາໂຣນ ເຖິງ ກາເມນ
20. ຢົບປາ
21. ຮ່ອມພູເຢຊະເຣເອນ
22. ພູຕາໂບເຣ
23. ທະເລຄາລີເລ ແລະ ພູບູລົມສຸກ
24. ກາເປນາອູມ
25. ແມ່ນ້ຳຈໍແດນ
26. ກາຍຊາເຣຍ ຟີລິບປອຍ
27. ນາຊາເຣັດ
28. ດານ
29. ອາແຖນ
30. ໂກຣິນໂທ
31. ເອເຟໂຊ
32. ເກາະປັດໂມ



## 1. ແມ່ນ້ຳນິນ ແລະ ເອຢິບ



ພືດພັນທັນຍາຫານເຕີບໂຕຢູ່ແຄມແມ່ນ້ຳນິນ. ຢູ່ໃນບ່ອນເຊັ່ນນີ້, ມານດາຂອງ ໂມເຊ ໄດ້ເຊື່ອງລູກຊາຍຂອງນາງໄວ້. ທັດໄປນັ້ນແມ່ນເຂດທະເລຊາຍ ຊຶ່ງສ່ວນຫລາຍເປັນເຂດຂອງປະເທດເອຢິບ.

*ເຫດການທີ່ສຳຄັນ:* ແຜ່ນດິນນີ້ໄດ້ຖືກພົບເຫັນໂດຍນາງເອຢິບໂຕ (ອຣຮ 1:23–25). ອັບຣາຮາມ ໄດ້ໄປປະເທດເອຢິບ (ປຖກ 12:10–20; ອຣຮ 2:21–25). ໂຢເຊັບໄດ້ຖືກຂາຍໄປປະເທດເອຢິບ, ໄດ້ກາຍເປັນຜູ້ປົກຄອງ, ແລະ ໄດ້ຊ່ວຍເຫລືອຄອບຄົວຂອງເພິ່ນຈາກຄວາມອຶດຢາກ (ປຖກ 37; 39–46). ລູກຫລານຂອງຢາໂຄບໄດ້ອາໄສຢູ່ໃນເອຢິບ (ປຖກ 47; ອພຍ 1; 12:40). ລູກສາວຂອງຟາຣາໂອ ໄດ້ພົບເຫັນແອນ້ອຍໂມເຊຢູ່ໃນແມ່ນ້ຳ ແລະ ໄດ້ເອົາລາວມາລ້ຽງ (ອພຍ 2:1–10). ໂມເຊໄດ້ພາຊາວອິດສະຣາເອນອອກຈາກເອຢິບ (ອພຍ 3–14). ມາຣີ, ໂຢເຊັບ, ແລະ ພຣະເຢຊູ ໄດ້ໄປປະເທດເອຢິບ ຊົ່ວໄລຍະໜຶ່ງ ເພື່ອໜີຈາກເຮໂຣດ (ມທ 2:13–15, 19–21). ໃນຍຸກສຸດທ້າຍ, ຊາວເອຢິບຈະຮູ້ຈັກພຣະຜູ້ເປັນເຈົ້າ, ແລະ ພຣະຜູ້ເປັນເຈົ້າຈະອວຍພອນປະເທດເອຢິບ (ອຊຢ 19:20–25). (ເບິ່ງ ຄມພ ເອຢິບ.)

## 2. ພູຊີນາຍ (ໂຮເຣັບ) ແລະ ຖິ່ນແຫ້ງແລ້ງກັນດານຊີນາຍ



ມີ ສະຖານ ທີ່ ຫລາຍ ບ່ອນ ທີ່ ເປັນ ໄປ ໄດ້ ສຳ ລັບ ພູ ຊີນາຍ. ສະ ຖານ ທີ່ ຕາມ ທີ່ ບອກ ເລົ່າ ກັນ ມາ ແມ່ນ ເຈເບນ ມູສາ (ພູໂມເຊ), ທີ່ຢູ່ໃນຮູບນີ້.

*ເຫດການທີ່ສຳຄັນ:* ພຣະເຈົ້າໄດ້ປະກົດຕໍ່ໂມເຊ ແລະ ໄດ້ປະທານພຣະບັນຍັດສິບປະການໃຫ້ເພິ່ນ (ອພຍ 19–20). ໂມເຊ, ອາໂຣນ, ລູກຊາຍສອງຄົນຂອງອາໂຣນ, ແລະ ພວກຜູ້ເຖົ້າແກ່ 70 ຄົນ ໄດ້ເຫັນ ແລະ ໄດ້ສົນທະນາກັບພຣະເຈົ້າ (ອພຍ 24:9–12). ພຣະເຈົ້າໄດ້ໃຫ້ຄຳແນະນຳແກ່ໂມເຊ ເລື່ອງການສ້າງສະຖານທີ່ນະມັດສະການ (ອພຍ 25–28; 30–31). ຊາວອິດສະຣາເອນໄດ້ນະມັດສະການງົວຄຳທີ່ພວກເຂົາໄດ້ຊັກຊວນໃຫ້ອາໂຣນສ້າງຂຶ້ນ (ອພຍ 32:1–8). ເອລີຢາໄດ້ໜີຈາກແຜ່ນດິນນີ້ ຈາກຮ່ອມພູເຢຊະເຣເອນ, ບ່ອນທີ່ລາຊີນີເຢເຊເບນໄດ້ອາໄສຢູ່ (1 ກສ 19:1–18). ນີ້ກໍເປັນບ່ອນທີ່ເອລີຢາໄດ້ເວົ້າລົມນຳພຣະເຈົ້າຄືກັນ (1 ກສ 19:8–19). (ເບິ່ງ ຄມພ ຊີນາຍ, ພູ.)

### 3. ຖິ່ນແຫ້ງແລ້ງກັນດານຢູດາຍ



ຖິ່ນ ແຫ້ງ ແລ້ງ ກັນ ດານ ຢູດາຍ ຕັ້ງ ຢູ່ ໃນ ທິດ ຕາ ເວັນ ອອກຂອງເຢຣູຊາເລັມ ແລະ ລົງໄປເຖິງທະເລຕາຍ.

*ເຫດການທີ່ສຳຄັນ:* ຖິ່ນ ແຫ້ງແລ້ງ ກັນ ດານຢູດາຍ ເປັນສະຖານທີ່ພັກເຊົາແຫ່ງສຳຄັນຂອງຫລາຍຍຸກ ໃນປະຫວັດສາດຂອງສະໄໝບູຮານ. ດາວິດ ໄດ້ລີ້ຊ້ອນຈາກກະສັດໂຊນ (1 ຊມອ 26:1–3). ພຣະເຢຊູໄດ້ຖືສິນອົດເຂົ້າເປັນເວລາ 40 ມື້ ແລະ 40 ຄືນ (ມທ 4:1–11; ມຣກ 1:12–13). ພຣະເຢຊູໄດ້ໃຊ້ເສັ້ນທາງສາຍນີ້ ຈາກເຢຣູຊາເລັມ ໄປຫາ ເຢຣິໂກ ຜ່ານຖິ່ນແຫ້ງແລ້ງກັນດານຢູດາຍ ໃນຄຳອຸປະມາເລື່ອງໄທຊາມາເຣຍຜູ້ໃຈດີ ເພາະຜູ້ເດີນທາງຄົນດຽວ ມັກຖືກລອບທຳຮ້າຍ ຢູ່ໃນເຂດນີ້ (ລກ 10:25–37). (ເບິ່ງ ຄມພ ທະເລຕາຍ.)

## 4. ກາເດັດ-ບານເນອາ



ນີ້ຄືພາບຂອງທະເລຊາຍອັນກວ້າງໃຫຍ່ເບື້ອງຕາເວັນອອກສ່ຽງເໜືອ (ກໍຖືກເອີ້ນວ່າ ວາດີ ນຳ ອີກ) ບ່ອນທີ່ ກາເດັດ-ບານເນອາ ຕັ້ງຢູ່. ສາຍນ້ຳທີ່ໄຫລຜ່ານມາທາງນີ້ ລະຫວ່າງລະດູຝົນ ເຮັດໃຫ້ສະຖານທີ່ແຫ່ງນີ້ ເຕັມໄປດ້ວຍນ້ຳ ແລະ ອຸດົມສົມບູນ ໃນຖິ່ນແຫ້ງແລ້ງກັນດານສິນ.

*ເຫດການທີ່ສຳຄັນ:* ສະຖານທີ່ແຫ່ງນີ້ອາດເປັນຈຸດທີ່ໂມເຊໄດ້ສົ່ງພວກຜູ້ຊາຍ 12 ຄົນ ໄປສືບເບິ່ງແຜ່ນດິນການາອານ (ຈບຊ 13:17–30). ມັນເປັນບ່ອນທີ່ຊາວອິດສະຣາເອນໄດ້ຕັ້ງຄ້າຍພັກ ໃນໄລຍະ 38 ປີ ຂອງການຊັດເຊພະເນຈອນໄປໃນຖິ່ນແຫ້ງແລ້ງກັນດານເປັນເວລາ 40 ປີ ຂອງພວກເຂົາ (ພບຍ 2:14). ນາງມີຣີອາມ ໄດ້ຕາຍໄປ ແລະ ໄດ້ຖືກຝັງໄວ້ຢູ່ທີ່ນີ້ (ຈບຊ 20:1). ນີ້ຄືສະຖານທີ່ ທີ່ໂກຣາ ໄດ້ເຮັດການກະບົດ, ນີ້ຄືສະຖານທີ່ ທີ່ຜູ້ຄົນເວົ້າຈົ່ມ, ແລະ ນີ້ຄືສະຖານທີ່ ທີ່ໄມ້ຄ້ອນເທົ້າຂອງອາໂຣນອອກດອກ (ຈບຊ 16–17). ໃກ້ສະຖານທີ່ແຫ່ງນີ້ ທີ່ໂມເຊໄດ້ຕີໂງ່ນຫີນ ແລະ ນ້ຳໄດ້ໄຫລອອກມາ (ຈບຊ 20:7–11).

## 5. ອຸບມຸງຂອງປິຕຸ



ອາຄານແຫ່ງນີ້, ແຫ່ງໜຶ່ງໃນບັນດາອາຄານທີ່ໂດ່ງດັງ ຢູ່ໃນແຜ່ນດິນສັກສິດ, ໄດ້ຖືກສ້າງຂຶ້ນໃນເມືອງເຮັບໂຣນ ໂດຍກະສັດເຮໂຣດ ຕາມທີ່ບອກເລົ່າກັນມາວ່າ ດັ້ງເດີມເປັນຖ້ຳມັກເປລາ, ທີ່ອັບຣາຮາມໄດ້ຊື້ເພື່ອເປັນສະຖານທີ່ຝັງຄອບຄົວ (ປຖກ 23).

*ເຫດການທີ່ສຳຄັນ:* ສະຖານທີ່ຝັງສົບຂອງນາງຊາຣາ (ປຖກ 23) ແລະ ອັບຣາຮາມ (ປຖກ 25:9). ອີຊາກ, ນາງເຣເບກາ, ແລະ ນາງເລອາ ກໍໄດ້ຖືກຝັງໄວ້ຢູ່ທີ່ນີ້ຄືກັນ (ປຖກ 49:30–31). ສົບຂອງຢາໂຄບ ໄດ້ຖືກນຳມາຈາກເອຢິບ ຫາການາອານ ແລະ ໄດ້ຖືກຝັງໄວ້ຢູ່ໃນຖ້ຳແຫ່ງນີ້ (ປຖກ 50).

**6. ເຂດພູດອຍຢູດາຍ**



ເຂດພູດອຍຢູດາຍ ມີຄວາມຍາວປະມານ 56 ກິໂລແມັດ ແລະ ຄວາມກວ້າງ 27 ກິໂລແມັດ. ທີ່ດິນສ່ວນໃຫຍ່ຂອງພູດອຍແຫ່ງນີ້ ເປັນດິນທີ່ມີຫີນຫລາຍ ແລະ ຍາກທີ່ຈະປູກຝັງ. ຄ້ອຍພູໄດ້ແຍກອອກໄປໂດຍຮອມພູຫລາຍບ່ອນ ແລະ ເປັນດິນແດນທີ່ອຸດົມສົມບູນຫລາຍສົມຄວນ. ຊາວອິດສະຣາເອນໃນສະໄໝບູຮານ ໄດ້ອາໄສຢູ່ຕາມຄ້ອຍພູເຫລົ່ານີ້, ແລະ ໃຊ້ມັນເປັນສິ່ງປົກປ້ອງພວກເຂົາຈາກພວກຮຸກຮານ.

*ເຫດການທີ່ສຳຄັນ:* ພຣະຜູ້ເປັນເຈົ້າໄດ້ມອບແຜ່ນດິນແຫ່ງນີ້ໃຫ້ແກ່ອັບຣາຮາມ ແລະ ລູກຫລານຂອງເພິ່ນ (ປຖກ 13:14–18; 17:8). ນາງຊາຣາ ແລະ ອັບຣາຮາມ ໄດ້ຖືກຝັງໄວ້ຢູ່ໃນຖ້ຳມັກເປລາ, ໃນເມືອງເຮັບໂຣນ (ປຖກ 23:19; 25:9). ດາວິດໄດ້ຍຶດຄອງເຢຣູຊາເລັມຈາກຊາວເຢບຸດ (2 ຊມອ 5:4–9). ເຫດການຕ່າງໆທີ່ເກີດຂຶ້ນໃນສະໄໝພຣະຄຳພີເດີມໄດ້ຖືກບັນທຶກໄວ້ວ່າ ມັນໄດ້ເກີດຂຶ້ນຢູ່ໃນຄ້ອຍພູແຫ່ງນີ້ ຫລາຍກວ່າໃນພາກພື້ນອື່ນໆ.

## 7. ເບັດເລເຮັມ



ຮູບພາບນີ້ ສະແດງໃຫ້ເຫັນຄ້ອຍພູ ທີ່ເຕັມໄປດ້ວຍກ້ອນຫີນ ແລະ ທົ່ງລ້ຽງສັດຢູ່ຂ້າງໜ້າ, ພ້ອມດ້ວຍເມືອງເບັດເລເຮັມໃນສະໄໝໃໝ່ ຢູ່ຂ້າງຫລັງ.

*ເຫດການທີ່ສຳຄັນ:* ນາງຣາເຊັນໄດ້ຖືກຝັງໄວ້ຢູ່ໃກ້ບ່ອນນີ້ (ປຖກ 35:16–20). ນາງຣຸດ ແລະ ໂບອາດໄດ້ອາໄສຢູ່ບ່ອນນີ້ (ນຣ 1:19–2:4). ກະສັດດາວິດໄດ້ເກີດມາ ແລະ ຖືກຫົດສົງໃຫ້ເປັນກະສັດຢູ່ບ່ອນນີ້ (1 ຊມອ 16:1–13). ພຣະຜູ້ຊ່ວຍໃຫ້ລອດໄດ້ກຳເນີດຢູ່ບ່ອນນີ້, ແລະ ຄົນລ້ຽງແກະ ແລະ ພວກໂຫລາຈານໄດ້ມານະມັດສະການພຣະອົງ (ມທ 2:1–11; ລກ 2:4–16). (ເບິ່ງ ຄມພ ເບັດເລເຮັມ.)

**8. ເຢຣູຊາເລັມ**



ຫລຽວເບິ່ງທາງເໜືອຂອງເຢຣູຊາເລັມ. ຢູ່ທາງກາງຂອງຮູບນີ້ ແມ່ນວັດຂອງຊາວມຸດສະລິມ ຊຶ່ງມີຫລັງຄາເປັນສີຄຳ, ເອີ້ນວ່າ ກະໂຈມຫີນ. ໃນສະໄໝບູຮານ ຊາວຢິວໄດ້ນະມັດສະການຢູ່ພຣະວິຫານຢູ່ບ່ອນນີ້. ກຳແພງທີ່ຢູ່ໃກ້ກະໂຈມຫີນ ເປັນກຳແພງອ້ອມເມືອງເຢຣູຊາເລັມເກົ່າ. ຢູ່ກຳແພງທາງເບື້ອງຂວາ ແມ່ນຮ່ອມພູກິດໂຣນ. ຢູ່ໄກໆທາງເບື້ອງຂວາ, ນອກຮູບ, ແມ່ນພູໝາກກອກເທດ. ຢູ່ທາງເໜືອ, ເລີຍໄປຈາກກະໂຈມຫີນ ອາດເປັນສະຖານທີ່ ທີ່ເອີ້ນວ່າ ໂຄລະໂຄທາ, ຫລື ຄາວາຣີ.

*ເຫດການທີ່ສຳຄັນ:* ຕົ້ນເດີມ ເມືອງເຢຣູຊາເລັມ ມີຊື່ວ່າ ຊາເລັມ (ພສສ 76:2). ອັບຣາຮາມໄດ້ຈ່າຍສ່ວນສິບໃຫ້ເມນຄີເສເດັກ (ປຖກ 14:18–20). ອັບຣາຮາມໄດ້ມາຖວາຍອີຊາກ (ປຖກ 22:2–14). ກະສັດດາວິດໄດ້ຍຶດຄອງເຢຣູຊາເລັມຈາກພວກເຢບຸດ (2 ຊມອ 5:4–9). ກະສັດໂຊໂລໂມນໄດ້ສ້າງພຣະວິຫານຫລັງໜຶ່ງຂຶ້ນ (1 ກສ 6–7). ລີໄຮໄດ້ໜີຈາກ ເພື່ອໄປຫາແຜ່ນດິນແຫ່ງຄຳສັນຍາ (1 ນຟ 1:4; 2). ພຣະຜູ້ຊ່ວຍໃຫ້ລອດໄດ້ປະຕິບັດສາດສະໜາກິດ, ໄດ້ຊົດໃຊ້ແທນບາບຂອງເຮົາ, ແລະ ໄດ້ຟື້ນຄືນພຣະຊົນ (ມທ 21–28). ດັ່ງທີ່ພຣະຜູ້ຊ່ວຍໃຫ້ລອດໄດ້ທຳນາຍໄວ້, ເຢຣູຊາເລັມໄດ້ຖືກທຳລາຍ ບໍ່ດົນຫລັງຈາກພຣະອົງໄດ້ສິ້ນພຣະຊົນ (ຈສ—ມ 1:3–20). ເຢຣູຊາເລັມຈະຖືກບຸກລຸກໃນຍຸກສຸດທ້າຍ (ອຊກ 38–39; ຢອ 2–3; ພນມ 11; 16). ພຣະຜູ້ຊ່ວຍໃຫ້ລອດຈະມາປະກົດຢູ່ບ່ອນນີ້ ຊຶ່ງເປັນພາກສ່ວນໜຶ່ງຂອງການສະເດັດມາຄັ້ງທີສອງຂອງພຣະອົງ (ຊກຢ 12–14; ຄພ 45:48–53). (ເບິ່ງ ຄມພ ເຢຣູຊາເລັມ; ຊາເລັມ.)

## 9. ພຣະວິຫານຂອງເຮໂຣດ



ຮູບພາບນີ້ສະແດງໃຫ້ເຫັນຮູບແບບຂອງພຣະວິຫານຂອງເຮໂຣດ (ອັດຕາສ່ວນ ຂະໜາດ 1:50) ຊຶ່ງຄິດວ່າຖືກສ້າງຂຶ້ນໃນ ຄ.ສ. 67. ກຳແພງອ້ອມຮອບພຣະວິຫານ ປິດລ້ອມສະຖານທີ່ສັກສິດທີ່ສຸດ, ສະຖານທີ່ສັກສິດ, ແລະ ສະໜາມທີ່ກວ້າງໃຫຍ່ສາມແຫ່ງ.

*ເຫດການທີ່ສຳຄັນ:* ໂຢເຊັບ ແລະ ນາງມາຣີ ໄດ້ພາກຸມມານນ້ອຍເຢຊູ ມາທີ່ພຣະວິຫານ (ລກ 2:22–38). ພຣະຜູ້ຊ່ວຍໃຫ້ລອດໄດ້ສອນຢູ່ໃນພຣະວິຫານ ຕອນມີອາຍຸໄດ້ 12 ພັນສາ (ລກ 2:41–46). ພຣະຜູ້ຊ່ວຍໃຫ້ລອດໄດ້ຂັບໄລ່ຄົນຄ້າຂາຍອອກຈາກພຣະວິຫານ (ມທ 21:12–13) ແລະ ໄດ້ທຳນາຍເຖິງການທຳລາຍຂອງພຣະວິຫານ (ມທ 24:1–2). ພຣະວິຫານໃນອະນາຄົດ ຈະຖືກສ້າງຂຶ້ນໃນເຢຣູຊາເລັມ (ອຊກ 40–48; ຊກຢ 8:7–9). (ເບິ່ງ ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.)

## 10. ຂັ້ນໄດໄປສູ່ພຣະວິຫານ



ເຂດຂອງພຣະວິຫານໄດ້ຖືກແຍກອອກເປັນຫລາຍສະໜາມ, ແລະ ສະໜາມຊັ້ນນອກແມ່ນຢູ່ທາງລຸ່ມ. ຜູ້ນະມັດສະການ ຈະເຂົ້າໄປທາງປະຕູຕ່າງໆ, ລວມທັງປະຕູບ່ອນທີ່ພາຂຶ້ນຂັ້ນໄດເຫລົ່ານີ້ ເຂົ້າໄປຫາສະໜາມຊັ້ນນອກ ແລ້ວເຂົ້າໄປຫາຊັ້ນໃນ. ເປັນເວລາຫລາຍປີ ທີ່ຫລາຍພັນຄົນໄດ້ຂຶ້ນລົງຂັ້ນໄດເຫລົ່ານີ້, ລວມທັງພຣະບຸດຂອງພຣະເຈົ້າ. ເມື່ອກອງທັບຂອງຕີໂຕໄດ້ທຳລາຍພຣະວິຫານໃນປີ ຄ.ສ. 70, ຂັ້ນໄດເຫລົ່ານີ້ ໄດ້ຖືກຖົມດ້ວຍເສດຂອງສິ່ງທີ່ເພພັງ. ມັນໄດ້ຖືກຄົ້ນພົບ ໂດຍນັກບູຮານຄະດີ ໃນລະຫວ່າງປີ 1970 ຕອນຮື້ຟື້ນເມືອງເຢຣູຊາເລັມ.

*ເຫດການທີ່ສຳຄັນ:* ໃນພາບນິມິດເອເຊກຽນໄດ້ເຫັນຂະໜາດ ແລະ ຮູບຮ່າງຂອງພຣະວິຫານໃນອະນາຄົດ (ອຊກ 40). (ເບິ່ງ ຄມພ ພຣະວິຫານ, ບ້ານຂອງພຣະຜູ້ເປັນເຈົ້າ.)

**11. ພູໝາກກອກເທດ**



ພາບນີ້ແມ່ນເບິ່ງໄປທາງພາກຕາເວັນອອກຂອງພູໝາກກອກເທດ. ອາຄານທີ່ຢູ່ທາງໜ້າ ຕັ້ງຢູ່ຈຸດບ່ອນທີ່ເປັນສວນເຄັດເຊມາເນ. ໃນວັນທີ 24 ເດືອນຕຸລາ, ປີ 1841, ແອວເດີ ອໍສັນ ຮາຍດ໌ ແຫ່ງກຸ່ມອັກຄະສາວົກສິບສອງ ໄດ້ຍ່າງຂຶ້ນໄປເທິງພູໝາກກອກເທດ ແລະ ໄດ້ອະທິຖານອຸທິດ ສຳລັບການກັບຄືນມາຂອງລູກຫລານຂອງອັບຣາຮາມ ແລະ ການສ້າງພຣະວິຫານ.

*ເຫດການທີ່ສຳຄັນ:* ຊາວໂຣມໄດ້ທຳລາຍເມືອງເຢຣູຊາເລັມ ໃນ ຄ.ສ. 70 ດັ່ງທີ່ພຣະຜູ້ຊ່ວຍໃຫ້ລອດໄດ້ບອກໄວ້ລ່ວງໜ້າ ຈາກພູໝາກກອກເທດ (ເບິ່ງ ຈສ—ມ 1:23). ພຣະຜູ້ຊ່ວຍໃຫ້ລອດ ຈະສະເດັດມາຍັງພູໝາກກອກເທດ ກ່ອນພຣະອົງຈະປະກົດຕົວຕໍ່ຊາວໂລກທັງຫລາຍ. (ເບິ່ງ ຊກຢ 14:3–5; ຄພ 45:48–53; 133:19–20; ຄມພ ໝາກກອກເທດ, ພູ.)

**12. ສວນເຄັດເຊມາເນ**



ຮູບພາບນີ້ຂອງຕົ້ນໝາກກອກທີ່ເຖົ້າແກ່ ແມ່ນຈາກບ່ອນຕາມທີ່ເລົ່າກັນມາວ່າ ເປັນສວນເຄັດເຊມາເນ. ພຣະຜູ້ຊ່ວຍໃຫ້ລອດໄດ້ອະທິຖານໃກ້ບ່ອນນີ້ ຫລັງຈາກໄດ້ອອກຈາກຫ້ອງຊັ້ນເທິງ ໃນຄ່ຳຄືນທີ່ພຣະອົງຖືກທໍລະຍົດ.

*ເຫດການທີ່ສຳຄັນ:* ຢູ່ບ່ອນນີ້ ພຣະເຢຊູຄຣິດໄດ້ເລີ່ມຕົ້ນຮັບທຸກທໍລະມານສຳລັບບາບຂອງມວນມະນຸດ (ມທ 26:36–44; ມຣກ 14:32–41; ຄພ 19:16–19). ຫລັງຈາກພຣະອົງໄດ້ອະທິຖານແລ້ວ ພຣະອົງໄດ້ຖືກຢູດາອິສະກາຣີອົດ ທໍລະຍົດ, ແລະ ສານຸສິດຂອງພຣະອົງໄດ້ປະຖິ້ມພຣະອົງໄປຊົ່ວໄລຍະໜຶ່ງ ຫລັງຈາກທີ່ພຣະອົງໄດ້ຖືກຈັບຕົວໃນສວນ (ມຣກ 14:50). (ເບິ່ງ ຄມພ ເຄັດເຊມາເນ.)

## 13. ໂຄລະໂຄທາ



ຜາຫີນແຫ່ງນີ້ ຊຶ່ງຄ້າຍຄືກັນກັບຫົວກະໂຫລກ ແລະ ຢູ່ນອກປະຕູດາມັສກັດຂອງເຢຣູຊາເລັມ (ຢຮ 19:17, 20), ອາດເປັນສະຖານທີ່ ທີ່ເອີ້ນວ່າ ໂຄລະໂຄທາ, ບ່ອນທີ່ການຄຶງໄດ້ເກີດຂຶ້ນ.

*ເຫດການທີ່ສຳຄັນ:* ຫລັງຈາກພຣະເຢຊູໄດ້ຖືກຂ້ຽນຕີ ແລະ ຖືກເຍາະເຍີ້ຍ, ພຣະອົງໄດ້ຖືກພາມາຫາ "ສະຖານທີ່ ທີ່ເອີ້ນວ່າ ໂຄລະໂຄທາ, . . . ມາຫາພູຫົວກະໂຫລກ," ບ່ອນທີ່ພຣະອົງໄດ້ຖືກຄຶງ (ມທ 27:26–35; ຢຮ 19:17–18). (ເບິ່ງ ຄມພ ໂຄລະໂຄທາ.)

## 14. ສວນອຸບມຸງ



ອາດເປັນສະຖານທີ່ແນ່ນອນຂອງສວນອຸບມຸງ ຂອງໂຢເຊັບ ແຫ່ງອາຣິມາທາຍ. ສາດສະດາບາງທ່ານຂອງສະໄໝໃໝ່ ຮູ້ສຶກວ່າພຣະສົບຂອງພຣະຜູ້ຊ່ວຍໃຫ້ລອດ ໄດ້ຖືກວາງໄວ້ຢູ່ໃນອຸບມຸງ ທີ່ຢູ່ໃນຮູບນີ້.

*ເຫດການທີ່ສຳຄັນ:* ຫລັງຈາກພຣະຜູ້ຊ່ວຍໃຫ້ລອດໄດ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນ, ພຣະກາຍຂອງພຣະອົງໄດ້ຖືກວາງໄວ້ຢູ່ໃນອຸບມຸງໃໝ່ ຊຶ່ງໄດ້ເຈາະໄວ້ໃນໂງ່ນຫີນ (ມທ 27:57–60). ສາມມື້ຈາກນັ້ນ, ຜູ້ຍິງຫລາຍຄົນ ໄດ້ໄປຫາອຸບມຸງ ແລະ ພົບເຫັນວ່າພຣະກາຍຂອງພຣະຜູ້ຊ່ວຍໃຫ້ລອດ ບໍ່ໄດ້ຢູ່ໃນນັ້ນ (ມທ 28:1; ຢຮ 20:1–2). ອັກຄະສາວົກເປໂຕ ແລະ ໂຢຮັນ ກໍໄດ້ໄປຫາອຸບມຸງຄືກັນ ແລະ ໄດ້ເຫັນວ່າພຣະກາຍຂອງພຣະຜູ້ຊ່ວຍໃຫ້ລອດໄດ້ຫາຍໄປ (ຢຮ 20:2–9). ພຣະຜູ້ຊ່ວຍໃຫ້ລອດທີ່ໄດ້ຟື້ນຄືນພຣະຊົນແລ້ວ ໄດ້ມາປະກົດຕໍ່ນາງມາຣີໄທມັກດາລາ (ຢຮ 20:11–18).

**15. ເຢຣິໂກ**



ຮູບພາບນີ້ສະແດງໃຫ້ເຫັນພືດພັນທັນຍາຫານໃນເຢຣິໂກສະໄໝປະຈຸບັນ. ໃນສະໄໝບູຮານ ມັນເປັນເມືອງທີ່ອ້ອມຮອບດ້ວຍກຳແພງ ຢູ່ໃນທົ່ງຂອງແມ່ນ້ຳຈໍແດນ, ຕ່ຳກວ່າລະດັບນ້ຳທະເລ 252 ແມັດ. ມັນເປັນເຂດທີ່ອຸດົມສົມບູນໄປດ້ວຍການກະເສດ ບ່ອນທີ່ຕົ້ນໝາກປາມ ແລະ ຕົ້ນໝາກກ້ຽງ ຈະເລີນເຕີບໂຕດີ. ຢູ່ຂ້າງຫລັງ ຕາມທີ່ບອກເລົ່າກັນມາ ແມ່ນພູແຫ່ງການທົດລອງ (ມທ 4:1–11).

*ເຫດການທີ່ສຳຄັນ:* ໃກ້ບ່ອນນີ້, ໂຢຊວຍ ແລະ ລູກຫລານຂອງອິດສະຣາເອນ ໄດ້ເດີນຂ້າມແມ່ນ້ຳຈໍແດນ ເປັນເທື່ອທຳອິດ, ເຂົ້າໄປສູ່ແຜ່ນດິນແຫ່ງຄຳສັນຍາ (ຢຊ 2:1–3; 3:14–16). ພຣະຜູ້ເປັນເຈົ້າໄດ້ບັນດານໃຫ້ກຳແພງເມືອງພັງລົງມາ ຢູ່ຕໍ່ໜ້າກອງທັບຂອງຊາວອິດສະຣາເອນ (ຢຊ 6; ເບິ່ງ ຮຮ 11:30 ນຳອີກ). ໂຢຊວຍໄດ້ສາບແຊ່ງເມືອງ (ຢຊ 6:26), ຊຶ່ງໄດ້ເກີດເປັນຈິງ (1 ກສ 16:34). ເອລີຊາໄດ້ປິ່ນປົວຊາດຂອງນ້ຳ ຢູ່ເຢຣິໂກ (2 ກສ 2:18–22). ພຣະຜູ້ຊ່ວຍໃຫ້ລອດເດີນຜ່ານບ່ອນນີ້ ຕອນພຣະອົງໄດ້ໄປຢ້ຽມຢາມເຢຣູຊາເລັມ ເປັນເທື່ອສຸດທ້າຍ, ໄດ້ປິ່ນປົວຄົນຕາບອດຊື່ ບາຣະຕີມາຍ ແລະ ໄດ້ພັກເຊົາຢູ່ນຳ ຊັກຂ່າຍ ທີ່ເປັນນາຍດ່ານພາສີ (ມຣກ 10:46–52; ລກ 18:35–43; 19:1–10). ເສັ້ນທາງໄປຫາເມືອງເຢຣິໂກ ຈາກ ເມືອງເຢຣູຊາເລັມ ຖືກນຳໃຊ້ໃນຄຳອຸປະມາເລື່ອງໄທຊາມາເຣຍຜູ້ໃຈດີ (ລກ 10:30–37). (ເບິ່ງ ຄມພ ເຢຣິໂກ.)

## 16. ຊີໂລ



ໃນພາບທີ່ເບິ່ງໄປທາງເບື້ອງຕາເວັນຕົກນີ້, ແມ່ນເມືອງຊີໂລເກົ່າແກ່ທີ່ຖືກທຳລາຍ ຊຶ່ງຕັ້ງຢູ່ທາງຊ້າຍຖັດຈາກຈຸດກາງ.

*ເຫດການທີ່ສຳຄັນ:* ເຜົ່າຕ່າງໆຂອງອິດສະຣາເອນໄດ້ມາເຕົ້າໂຮມກັນເພື່ອຮັບເອົາເຂດແດນຂອງໃຜມັນ (ຢຊ 18–22). ສະຖານທີ່ນະມັດສະການ ແລະ ຫີບພັນທະສັນຍາ ໄດ້ຖືກຕັ້ງໄວ້ບ່ອນນີ້ ແລະ ໄດ້ຕັ້ງຢູ່ເປັນເວລາຫລາຍສັດຕະວັດ (ຢຊ 18:1). ຢູ່ບ່ອນນີ້ນາງຮັນນາ ໄດ້ອະທິຖານ ແລະ ອຸທິດ ຊາມູເອນ ລູກຊາຍຂອງນາງ ເພື່ອຮັບໃຊ້ພຣະຜູ້ເປັນເຈົ້າ (1 ຊມອ 1). ຊາວອິດສະຣາເອນໄດ້ເອົາຫີບ ໄປຈາກເມືອງຊີໂລ ແລະ ໄດ້ຜ່າຍແພ້ໃຫ້ຊາວຟີລິດສະຕິນ, ຜູ້ຊຶ່ງໄດ້ຢຶດເອົາຫີບໄປ. (1 ຊມອ 4:1–11).

**17. ຊີເຄມ**



ສະຖານທີ່ບູຮານຂອງເມືອງຊີເຄມ. ຢູ່ທາງໜ້າແມ່ນພູເກຣິຊິມ, ແລະ ຕໍ່ໄປນັ້ນແມ່ນພູເອບານ. ເມືອງຊີເຄມຕັ້ງຢູ່ລະຫວ່າງກາງພູສອງໜ່ວຍ.

*ເຫດການທີ່ສຳຄັນ:* ອັບຣາຮາມໄດ້ຕັ້ງຄ້າຍພັກຢູ່ເມືອງຊີເຄມ (ປຖກ 12:6–7). ຢາໂຄບໄດ້ຕັ້ງຄ້າຍພັກຢູ່ບ່ອນນີ້ ແລະ ໄດ້ຊື້ທີ່ດິນຕອນໜຶ່ງ (ປຖກ 33:18–20). ພູເກຣິຊິມ ເປັນພູທີ່ໃຫ້ພອນ, ກົງກັນຂ້າມກັບພູເອບານ ຊຶ່ງເປັນພູແຫ່ງການສາບແຊ່ງ (ພບຍ 27–28). ຢູ່ທີ່ພູເອບານ, ໂຢຊວຍໄດ້ສ້າງຫລັກອະນຸສອນຂຶ້ນ ແລະ ໄດ້ອ່ານກົດຂອງໂມເຊໃຫ້ຊາວອິດສະຣາເອນຟັງ (ຢຊ 8:30–35). ກະດູກຂອງໂຢເຊັບ ໄດ້ຖືກຝັງໄວ້ຢູ່ທີ່ຊີເຄມ (ຢຊ 24:32).

## 18. ໂດທານ ໃນຊາມາເຣຍ



ໂດທານ ເປັນ ດິນ ແດນ ທີ່ ເຕັມ ໄປ ດ້ວຍ ພູ ຜາ ແລະ ຮ່ອມພູ. ມັນ ມີທົ່ງທີ່ອຸດົມສົມບູນ. ເມື່ອຊາວອິດສະ ຣາເອນມາຕັ້ງຖິ່ນຖານຢູ່ບ່ອນນີ້, ພາກພື້ນນີ້ໄດ້ຖືກ ມອບໃຫ້ແກ່ມານາເຊ.

*ເຫດການທີ່ສຳຄັນ:* ໃນຮ່ອມພູໂດທານ, ໂຢເຊັບ ໄດ້ຖືກຂາຍ ໄປປະເທດເອຢິບ (ປຖກ 37:12–28). ໂອບາດີຢາ ໄດ້ຊ່ວຍຊີວິດສາດສະດາໜຶ່ງຮ້ອຍ ຄົນ ໂດຍການເຊື່ອງພວກເພິ່ນໄວ້ໃນພູ ຕອນເຢ ເຊເບນ ພະຍາຍາມຂ້າບັນດາສາດສະດາຂອງ ອິດສະຣາເອນ (1 ກສ 18:13). ກອງທັບຂອງຊີເຣຍ ໄດ້ຫຸ້ມລ້ອມເອລີຊາ ແລະ ຄົນໃຊ້ຂອງເພິ່ນ, ຜູ້ຊຶ່ງ ພຣະຜູ້ເປັນເຈົ້າໄດ້ຮັກສາໄວ້ຢ່າງມະຫັດສະຈັນ (2 ກສ 6:13–23).

## 19. ກາຍຊາເຣຍ ແລະ ທົ່ງພຽງຊາໂຣນ ເຖິງ ກາເມນ



ເບິ່ງໄປທາງເໜືອ ຜ່ານກາຍທ່າເຮືອກາຍຊາເຣຍ ແລະ ທົ່ງພຽງຊາໂຣນ. ພ້ອມນີ້ ຢູ່ສົ້ນເທິງຂອງຮູບພາບ ແມ່ນພູກາເມນ.

*ເຫດການ ທີ່ສຳ ຄັນ:* ເອລີຢາໄດ້ປະເຊີນໜ້າກັບສາດສະດາຈອມປອມຂອງພຣະບາອານ ຢູ່ເທິງພູກາເມນ (1 ກສ 18). ເວຍ ມາຣິສ໌ (ແປວ່າ ທາງໄປທະເລ), ເປັນເສັ້ນທາງທີ່ສຳຄັນໃນສະໄໝບູຮານ, ຢູ່ທາງຕາເວັນອອກຂອງກາຍຊາເຣຍ. ຫລັງຈາກທີ່ໄດ້ຮັບພາບນິມິດທີ່ໜ້າອັດສະຈັນໃຈ ໃນລະຫວ່າງຢູ່ຢົບປາແລ້ວ, ເປໂຕໄດ້ເລີ່ມຕົ້ນປະຕິບັດສາດສະໜາກິດ ໃນບັນດາຄົນຕ່າງຊາດ ໂດຍການສອນນາຍຮ້ອຍທະຫານໂຣມຄົນໜຶ່ງ ຊື່ ໂກເນລີໂອ ໃນກາຍຊາເຣຍ (ກຈກ 10). ຟີລິບໄດ້ສັ່ງສອນ ແລະ ໄດ້ອາໄສຢູ່ບ່ອນນີ້ ແລະ ໄດ້ມີລູກສາວສີ່ຄົນ ຜູ້ໄດ້ທຳນາຍ (ກຈກ 8:40; 21:8–9). ໂປໂລໄດ້ຖືກຈັບເຂົ້າຄຸກ ຢູ່ໃນເມືອງນີ້ ເປັນເວລາສອງປີ (ກຈກ 23–26). ເພິ່ນໄດ້ສັ່ງສອນພຣະກິດຕິຄຸນໃຫ້ແກ່ ເຟລິກ, ເຟຊະໂຕ, ແລະ ເຮໂຣດ ອັກຄຣິປາ ອົງທີສອງ, ຜູ້ໄດ້ກ່າວວ່າ, “ໃນເວລາສັ້ນໆນີ້ ເຈົ້າຄິດວ່າເຈົ້າຈະເຮັດໃຫ້ເຮົາເປັນຄຣິດສະຕຽນຊັ້ນບໍ” (ກຈກ 26:28).

**20. ຢົບປາ**



ເບິ່ງໄປທາງຕາເວັນຕົກສ່ຽງເໜືອ ຜ່ານກາຍທ່າເມືອງຢົບປາ.

*ເຫດການທີ່ສຳຄັນ:* ໂຢນາໄດ້ໄປເມືອງຢົບປາ ເພື່ອຂຶ້ນເຮືອໄປຫາເມືອງທາຣາຊິດ (ຢນ 1:1–3). ຢົບປາເປັນທ່າເຮືອ ບ່ອນທີ່ໄຊໂລໂມນ ແລະ ຕໍ່ມາ ເຊຣຸບບາເບນ ໄດ້ໃຊ້ ເພື່ອນຳທ່ອນໄມ້ຈາກປ່າສົນສີດາຂອງເລບານອນ ມາສ້າງພຣະວິຫານຂອງພວກເພິ່ນ (2 ຂຄ 2:16; ອຊຣ 3:7). ຢູ່ບ່ອນນີ້ ເປໂຕໄດ້ໂຜດນາງຕາບີທາ ຊຶ່ງຮູ້ຈັກກັນອີກວ່ານາງຊື່ ໂດຣະກາ ໃຫ້ຄືນຈາກຕາຍ (ກຈກ 9:36–43). ເປໂຕຍັງໄດ້ຮັບພາບນິມິດນຳອີກ ກ່ຽວກັບສັດທີ່ສະອາດ ແລະ ສັດທີ່ບໍ່ສະອາດ, ຊຶ່ງໄດ້ເປີດເຜີຍແກ່ເພິ່ນ ກ່ອນເພິ່ນໄດ້ເລີ່ມຕົ້ນປະຕິບັດສາດສະໜາກິດແກ່ຄົນຕ່າງຊາດ (ກຈກ 10). ອໍສັນ ຮາຍດ໌ ໄດ້ມາບ່ອນນີ້ ເພື່ອອຸທິດແຜ່ນດິນສັກສິດ ໃນປີ 1841.

## 21. ຮ່ອມພູເຢຊະເຣເອນ



ເບິ່ງໄປທາງໃຕ້ຈາກຈອມພູຕາໂບເຣ ລົງໄປຍັງພາກສ່ວນໜຶ່ງຂອງຮ່ອມພູເຢຊະເຣເອນ, ຊຶ່ງຮູ້ຈັກກັນອີກວ່າ ທົ່ງພຽງເອສະດາອີໂລນ. ເຖິງແມ່ນຜູ້ຄົນຄິດວ່າ ຮ່ອມພູເຢຊະເຣເອນ ເປັນຮ່ອມພູອັນກວ້າງໃຫຍ່ແຫ່ງໜຶ່ງ, ແຕ່ຄວາມຈິງແລ້ວ, ມັນເປັນຮ່ອມພູທີ່ຕິດຕໍ່ໃສ່ກັບທົ່ງພຽງອັກໂຄ, ຮ່ອມພູຈໍແດນ ແລະ ພາກພື້ນທະເລຄາລີເລ. ຍົກຕົວຢ່າງ, ຮ່ອມພູເມກິດໂດແມ່ນຕັ້ງຢູ່ທາງທິດຕາເວັນຕົກຂອງຮ່ອມພູນີ້. ຮ່ອມພູເຢຊະເຣເອນ ເປັນເສັ້ນທາງເດີນສາຍສຳຄັນຜ່ານແຜ່ນດິນສັກສິດ ລະຫວ່າງ ທະເລເມດີແຕຣາເນ ທີ່ຢູ່ທາງທິດຕາເວັນຕົກ ແລະ ທ່ອມພູຈໍແດນ ທີ່ຢູ່ທາງທິດຕາເວັນອອກ.

*ເຫດການທີ່ສຳຄັນ:* ທາງໃຫຍ່ທີ່ສຳຄັນ ຊຶ່ງເຊື່ອມໂຍງປະເທດເອຢິບ ແລະ ເມໂຊໂປຕາເມຍ ກໍຜ່ານທ່ອມພູນີ້, ແລະ ສົງຄາມຫລາຍເທື່ອ ກໍໄດ້ສູ້ຮົບກັນຢູ່ບ່ອນນີ້ (ຜປ 1:22–27; 5:19; 2 ກສ 23:29–30). ການຂັດແຍ້ງເທື່ອສຸດທ້າຍໃນແຜ່ນດິນນີ້ ຈະເລີ່ມຕົ້ນດ້ວຍສົງຄາມຂອງອາມາເຄໂດນ, ຊຶ່ງຈະມີການສູ້ຮົບກັນ ບໍ່ດົນກ່ອນການສະເດັດມາຄັ້ງທີສອງຂອງພຣະຜູ້ຊ່ວຍໃຫ້ລອດ; ໄດ້ຊື່ນີ້ມາຈາກ *ຮາ ເມກິດໂດ,* ຫລື ພູເມກິດໂດ (ອຊກ 38; ຢອ 3:9–14; ຊກຢ 14:2–5; ພນມ 16:14–16).

**22. ພູຕາໂບເຣ**



ເບິ່ງ ໄປ ທາງ ຕາ ເວັນ ຕົກ ສ່ຽງ ເໜືອ ໄປ ທາງ ພູ ຕາ ໂບເຣ. ແຜ່ນດິນ ບ່ອນຕ່ຳທີ່ອ້ອມຮອບພູຕາໂບເຣ ເປັນພາກສ່ວນໜຶ່ງຂອງຮ່ອມພູເຢຊະເຣເອນ. ເມືອງ ນາຊາເຣັດຕັ້ງຢູ່ຄ້ອຍພູໃກ້ພູຕາໂບເຣ.

*ເຫດການທີ່ສຳຄັນ:* ເດໂບຣາ ແລະ ບາຣັກ ໄດ້ເຕົ້າໂຮມກຳລັງຂອງພຣະຜູ້ເປັນເຈົ້າ ໄປຕໍ່ສູ້ກັບ ຢາບິນ, ກະສັດຂອງຮາໂຊ (ຜປ 4:4–14). ຕາມທີ່ບອກເລົ່າກັນມາ ພູຕາໂບເຣ ເປັນສະຖາທີ່ ທີ່ພຣະຜູ້ຊ່ວຍໃຫ້ລອດໄດ້ປ່ຽນສະພາບ (ມທ 17:1–9); ພູອີກໜ່ວຍໜຶ່ງແມ່ນ ພູເຮີໂມນ. (ເບິ່ງ ຄມພ ການປ່ຽນສະພາບ.)

## 23. ທະເລຄາລີເລ ແລະ ພູບູລົມສຸກ



ເບິ່ງໄປທາງຕາເວັນຕົກສ່ຽງໃຕ້ ຜ່ານແຈເບື້ອງຕາເວັນຕົກສ່ຽງເໜືອ ຂອງທະເລຄາລີເລ, ຊຶ່ງເປັນອ່າວທະເລສາບນ້ຳຈືດ. ຕາມທີ່ບອກເລົ່າກັນມາ ໂນນພູທີ່ຢູ່ທາງກາງ ແມ່ນພູບູລົມສຸກ. ກາເປນາອູມແມ່ນຢູ່ທາງຊ້າຍ, ຢູ່ນອກຮູບ. ຕິເບເຣຍ ຢູ່ໄກໄປອີກໃນທາງໃຕ້ ຢູ່ແຄມຝັ່ງເບື້ອງຕາເວັນຕົກ.

*ເຫດການທີ່ສຳຄັນ:* ພຣະຜູ້ຊ່ວຍໃຫ້ລອດໄດ້ໃຊ້ເວລາສ່ວນຫລາຍ ຂອງການປະຕິບັດສາດສະໜາກິດໃນຊ່ວງມະຕະຂອງພຣະອົງ ຢູ່ໃນພາກພື້ນນີ້. ຢູ່ບ່ອນນີ້ ພຣະອົງໄດ້ເອີ້ນ ແລະ ໄດ້ແຕ່ງຕັ້ງ ອັກຄະສາວົກສິບສອງ (ມທ 4:18–22; 10:1–4; ມຣກ 1:16–20; 2:13–14; 3:7, 13–19; ລກ 5:1–11), ໄດ້ເທດສະໜາຢູ່ໂນນພູ (ມທ 5–7), ແລະ ໄດ້ສອນຄຳອຸປະມາ (ມທ 13:1–52; ມຣກ 4:1–34). ສິ່ງມະຫັດສະຈັນທີ່ພຣະອົງໄດ້ເຮັດ ຮ່ວມດ້ວຍ: ພຣະອົງໄດ້ປິ່ນປົວຄົນຂີ້ທູດ (ມທ 8:1–4); ໄດ້ຢຸດລົມພະຍຸ (ມທ 8:23–27); ໄດ້ຂັບໄລ່ຜີມານຮ້າຍອອກຈາກຊາຍໜຸ່ມ, ແລ້ວມັນໄດ້ໄປເຂົ້າສິງຝູງໂຕໝູ ແລະ ໂດດລົງທະເລ (ມຣກ 5:1–15); ໄດ້ລ້ຽງເຂົ້າ 5,000 ຄົນ ແລະ 4,000 ຄົນ (ມທ 14:14–21; 15:32–38); ໄດ້ບັນຊາສານຸສິດຂອງພຣະອົງໃຫ້ໂຍນມອງລົງນ້ຳ, ຊຶ່ງພວກເຂົາໄດ້ປາຢ່າງຫລວງຫລາຍ (ລູກາ 5:1–6); ໄດ້ປິ່ນປົວຫລາຍຄົນ (ມທ 15:29–31; ມຣກ 3:7–12); ແລະ ໄດ້ມາປະກົດຫລັງຈາກການຟື້ນຄືນພຣະຊົນຂອງພຣະອົງ ເພື່ອສອນສານຸສິດຂອງພຣະອົງ (ມຣກ 14:27–28; 16:7; ຢຮ 21:1–23). (ເບິ່ງ ຄມພ ຄາລີເລ.)

**24. ກາເປນາອູມ**



ກາເປນາອູມ, ຕັ້ງຢູ່ແຄມທະເລຕອນເໜືອຂອງທະເລຄາລີເລ, ເປັນຈຸດໃຈກາງຂອງການປະຕິບັດສາດສະໜາກິດຂອງພຣະເຢຊູຕໍ່ຊາວຄາລີເລ (ມທ 9:1–2; ມຣກ 2:1–5). ເປັນຈຸດໃຈກາງຂອງການປະມຸງ ແລະ ການຄ້າ ທີ່ຈະເລີນກ້າວໜ້າ, ມັນເປັນບ້ານຂອງຄົນຕ່າງຊາດ ແລະ ຂອງຊາວຢິວດ້ວຍ. ພົນລະເມືອງໃນສັດຕະວັດທີໜຶ່ງ ຄົງບໍ່ເກີນ 1,000 ຄົນ. ກາເປນາອູມໄດ້ຕັ້ງຢູ່ທາງແຍກ ບ່ອນແລກປ່ຽນສິນຄ້າຈຸດສຳຄັນ, ອ້ອມຮອບໄປດ້ວຍດິນແດນທີ່ອຸດົມສົມບູນ. ພວກທະຫານຊາວໂຣມໄດ້ສ້າງສະຖານທີ່ອາບນ້ຳ ແລະ ສະຖານທີ່ ເກັບສິ່ງຂອງໃນບ່ອນນີ້. ເຖິງແມ່ນສິ່ງມະຫັດສະຈັນຫລາຍຢ່າງໄດ້ເກີດຂຶ້ນໃນບ່ອນນີ້, ແຕ່ຜູ້ຄົນໂດຍທົ່ວໄປ ໄດ້ປະຕິເສດການປະຕິບັດສາດສະໜາກິດຂອງພຣະຜູ້ຊ່ວຍໃຫ້ລອດ. ສະນັ້ນ ພຣະເຢຊູ ຈຶ່ງໄດ້ສາບແຊ່ງເມືອງ (ມທ 11:20, 23–24). ເມື່ອເວລາຜ່ານໄປ, ກາເປນາອູມໄດ້ພັງທະລາຍ ແລະ ຍັງເປັນສະຖານທີ່ຮ້າງເປົ່າຢູ່ໃນທຸກວັນນີ້.

*ເຫດການທີ່ສຳຄັນ:* ກາເປນາອູມ ເປັນເມືອງທີ່ຮູ້ຈັກກັນວ່າ ເປັນ “ເມືອງແທ້ໆ” ຂອງພຣະຜູ້ຊ່ວຍໃຫ້ລອດ (ມທ 9:1–2; ມຣກ 2:1–5). ພຣະອົງໄດ້ເຮັດສິ່ງມະຫັດສະຈັນຫລາຍຢ່າງຢູ່ບ່ອນນີ້. ຍົກຕົວຢ່າງ, ພຣະອົງໄດ້ປິ່ນປົວຫລາຍຄົນ (ມຣກ 1:32–34), ລວມທັງຄົນຮັບໃຊ້ຂອງນາຍທະຫານ (ລກ 7:1–10), ແມ່ເຖົ້າຂອງເປໂຕ (ມຣກ 1:21, 29–31), ຄົນເປ້ຍທີ່ຕຽງນອນຂອງລາວຖືກຢ່ອນລົງຈາກຫລັງຄາ (ມຣກ 2:1–12), ແລະ ຊາຍມືລີບ (ມທ 12:9–13). ຢູ່ບ່ອນນີ້ ພຣະເຢຊູຍັງໄດ້ຂັບໄລ່ວິນຍານຜີຮ້າຍຫລາຍໂຕອອກໄປ (ມຣກ 1:21–28, 32–34), ໄດ້ໂຜດລູກສາວຂອງຢາອີໂຣຈາກຄວາມຕາຍ (ມທ 9:18–19, 23–26; ມຣກ 5:22–24, 35–43), ແລະ ໄດ້ເທດສະໜາເລື່ອງອາຫານແຫ່ງຊີວິດ ຢູ່ໃນທຳມະສາລາໃນເມືອງກາເປນາອູມ (ຢຮ 6:24–59). ພຣະຜູ້ຊ່ວຍໃຫ້ລອດໄດ້ສັ່ງໃຫ້ເປໂຕໄປຈັບປາຈາກ ທະເລຄາລີເລ, ແລ້ວໃຫ້ເປີດປາກມັນ ແລະ ເອົາເງິນຫລຽນຢູ່ໃນປາກປາມາເສຍພາສີ (ມທ 17:24–27).

**25. ແມ່ນ້ຳຈໍແດນ**



ແມ່ນ້ຳຈໍແດນເລີ່ມຕົ້ນຈາກເບື້ອງເໜືອຂອງທະເລຄາລີເລ ທີ່ໄຫລເຂົ້າມາໃສ່ ແລະ ໄຫລຕໍ່ລົງໄປສູ່ທະເລຕາຍ. ຮູບພາບນີ້ ແມ່ນຖ່າຍຢູ່ໃກ້ປາກທະເລຄາລີເລ.

*ເຫດການທີ່ສຳຄັນ:* ໂລດໄດ້ເລືອກເອົາທົ່ງຈໍແດນໃຫ້ກັບຕົນເອງ (ປຖກ 13:10–11). ໂຢຊວຍໄດ້ແຍກນ້ຳອອກຈາກກັນ, ແລ້ວຊາວອິດສະຣາເອນໄດ້ຂ້າມໄປຫາແຜ່ນດິນແຫ່ງຄຳສັນຍາ (ຢຊ 3:13–17; 4:1–9, 20–24). ເອລີຢາ ແລະ ເອລີຊາ ໄດ້ແຍກນ້ຳອອກຈາກກັນ (2 ກສ 2:5–8, 12–14). ນາອາມານໄດ້ຫາຍດີຈາກພະຍາດຂີ້ທູດ (2 ກສ 5:1–15). ໂຢຮັນບັບຕິສະໂຕ ໄດ້ໃຫ້ບັບຕິສະມາແກ່ຫລາຍຄົນ, ລວມທັງພຣະຜູ້ຊ່ວຍໃຫ້ລອດ (ມທ 3:1–6, 13–16). (ເບິ່ງ ຄມພ ແມ່ນ້ຳຈໍແດນ.)

**26. ກາຍຊາເຣຍ ຟີລິບປອຍ**



ກາຍຊາເຣຍ ຟີລິບປອຍ ຕັ້ງຢູ່ຕີນພູເຮີໂມນ. ບໍ່ນ້ຳນີ້ ແມ່ນຫົວນ້ຳແຫ່ງໜຶ່ງຂອງແມ່ນ້ຳຈໍແດນ. ເຮໂຣດ ຟີລິບ, ຜູ້ໄດ້ປົກຄອງເຂດນີ້, ໄດ້ສ້າງເມືອງນີ້ຂຶ້ນມາເພື່ອເປັນກຽດໃຫ້ກາຍຊາ (ຈັກກະພັດຂອງເພິ່ນ) ແລະ ຕົວເພິ່ນເອງ; ກ່ອນໜ້ານັ້ນ ເມືອງນີ້ຖືກເອີ້ນວ່າ ປານີ ແລະ ທຸກວັນນີ້ ເມືອງນີ້ຖືກເອີ້ນວ່າ ບານີ ພ້ອມທັງຖືກເອີ້ນວ່າ ກາຍຊາເຣຍ ຟີລິບປອຍ.

*ເຫດການທີ່ສຳຄັນ:* ພຣະຜູ້ຊ່ວຍໃຫ້ລອດໄດ້ພົບກັບສານຸສິດຂອງພຣະອົງຢູ່ກາຍຊາເຣຍ ຟີລິບປອຍ. ຢູ່ບ່ອນນີ້ ເປໂຕໄດ້ປະກາດວ່າ ພຣະຜູ້ຊ່ວຍໃຫ້ລອດເປັນ "ພຣະຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່." ຈາກນັ້ນພຣະຜູ້ຊ່ວຍໃຫ້ລອດໄດ້ສັນຍາວ່າ ເປໂຕຈະໄດ້ຮັບ "ຂໍກະແຈຂອງອານາຈັກສະຫວັນ"(ມທ 16:13–20).

## 27. ນາຊາເຣັດ



ທິວທັດຂອງເມືອງນາຊາເຣັດໃນສະໄໝໃໝ່ ເບິ່ງໄປທາງໃຕ້. ນາຊາເຣັດເປັນໝູ່ບ້ານນ້ອຍແຫ່ງໜຶ່ງ ໃນສະໄໝພຣະຄຣິສຕະທຳຄຳພີ.

*ເຫດການທີ່ສຳຄັນ:* ໃນພາບນິມິດ ນີໄຟໄດ້ເຫັນມານດາຂອງພຣະຜູ້ຊ່ວຍໃຫ້ລອດໃນນາຊາເຣັດ (1 ນຟ 11:13–22). ທູດສັບຣີເອນໄດ້ບອກນາງມາຣີວ່າ ນາງຈະເປັນມານດາຂອງພຣະຜູ້ຊ່ວຍໃຫ້ລອດ (ລກ 1:26–35). ທູດສັບຣີເອນໄດ້ບອກໂຢເຊັບໃຫ້ຮັບເອົານາງມາຣີມາເປັນເມຍ ແລະ ຕັ້ງຊື່ໃຫ້ລູກຊາຍວ່າ ເຢຊູ (ມທ 1:18–25). ພຣະເຢຊູໄດ້ເຕີບໃຫຍ່ຂຶ້ນໃນນາຊາເຣັດ (ມທ 2:19–23; ລກ 2:4–40; 4:16). ພຣະອົງໄດ້ສັ່ງສອນ ແລະ ໄດ້ປະກາດຢູ່ໃນທຳມະສາລາວ່າ ພຣະອົງເປັນພຣະເມຊີອາ (ລກ 4:16–21), ແຕ່ຜູ້ຄົນໃນນາຊາເຣັດໄດ້ປະຕິເສດພຣະອົງ (ມທ 13:54–58; ລກ 4:22–30). (ເບິ່ງ ຄມພ ນາຊາເຣັດ.)

**28. ດານ**



ເມືອງ ເກົ່າ ແກ່ ຂອງ ດານ ເຄີຍ ມີ ຊື່ວ່າ ລາກິດ (ຢຊ 19:47) ຫລື ລາອິດ (ຜປ 18:7, 14) ກ່ອນຊາວອິດສະຣາເອນຍຶດປົກຄອງແຜ່ນດິນ. ມີບໍ່ນໍ້າພຸຫລາຍແຫ່ງຢູ່ໃນບ່ອນນີ້, ພ້ອມດ້ວຍບໍ່ນໍ້າພຸທີ່ກາຍຊາເຣຍ ຟີລິບປອຍ, ເປັນແຫລ່ງຕົ້ນຕໍຂອງແມ່ນໍ້າຈໍແດນ. ສະຖານທີ່ພຣະວິຫານ ຂອງ ເຢໂຣໂບອາມ ຢູ່ ໃນ ຮູບ ພາບແຜ່ນນີ້.

*ເຫດການທີ່ສຳຄັນ:* ອັບຣາຮາມໄດ້ຊ່ວຍກູ້ໂລດ (ປຖກ 14:13–16). ເຜົ່າຂອງດານໄດ້ຍຶດຄອງເຂດນີ້ ແລະ ຕັ້ງຊື່ໃຫ້ວ່າ ດານ (ຢຊ 19:47–48). ເຢໂຣໂບອາມ ໄດ້ສ້າງພຣະວິຫານຈອມປອມຂຶ້ນ ພ້ອມດ້ວຍງົວຄຳ ຊຶ່ງເປັນສາເຫດໜຶ່ງຂອງຄວາມພິນາດຂອງສິບເຜົ່າ ທີ່ຢູ່ທາງເໜືອ (1 ກສ 12:26–33). ດານເປັນ ເມືອງທີ່ຕັ້ງຢູ່ ເໜືອສຸດຂອງອິດສະຣາເອນ—ດ້ວຍເຫດນີ້ ພຣະຄຳພີ ຈຶ່ງກ່າວເຖິງແຜ່ນດິນອິດສະຣາເອນວ່າ "ນັບຈາກ ເບເອນເຊບາ ເຖິງ ດານ" (2 ຂຄ 30:5; ເບເອນເຊບາ ເປັນເມືອງທີ່ຕັ້ງຢູ່ໃຕ້ສຸດ). (ເບິ່ງ ຄມພ ດານ.)

**29. ອາແຖນ**



ຮູບພາບນີ້, ແມ່ນຖ່າຍຈາກເອເລໂອປາໂຂ (ທີ່ປະຊຸມຂອງສະພາ), ສະແດງໃຫ້ເຫັນເມືອງບໍລິວານຂອງອາແຖນ, ສະຖານທີ່ນະມັດສະການຂອງພຣະເຈົ້າເພເກັນ. ເມືອງອາແຖນ ເປັນເມືອງເອກເກົ່າຂອງກຣີກ ແຫ່ງອາຕິກາ ແລະ ໃນສະໄໝພຣະຄຳພີໃໝ່ ມັນແມ່ນແຂວງອະຂາຢາ ຂອງຊາວໂຣມ. ມັນຖືກເອີ້ນຕາມຊື່ນີ້ ເພື່ອເປັນການໃຫ້ກຽດແກ່ ເຈົ້າແມ່ອາຕີນາເພເກັນຂອງກຣີກ. ເມື່ອເຖິງສະໄໝຂອງພຣະຄຳພີໃໝ່, ເມືອງອາແຖນໄດ້ສູນເສຍຊື່ສຽງທີ່ໂດ່ງດັງ ແລະ ຄວາມຮຸ່ງເຫລື້ອມຂອງມັນເກືອບໝົດ, ແຕ່ຍັງບັນຈຸຮູບປັ້ນ ແລະ ອະນຸສອນຂອງພຣະເຈົ້າ ແລະ ເຈົ້າແມ່ຫລາຍອົງ, ລວມທັງ "ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ" (ກຈກ 17:23).

*ເຫດການທີ່ສຳຄັນ:* ອັກຄະສາວົກໂປໂລໄດ້ໄປຢ້ຽມຢາມເມືອງ ແລະ ໄດ້ເທດສະໜາເລື່ອງ "ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ" ຢູ່ທີ່ປະຊຸມຂອງສະພາ (ກຈກ 17:15–34). ຜູ້ສອນສາດສະໜາໄດ້ຖືກສົ່ງໄປຈາກເມືອງອາແຖນ ໄປຫາພາກສ່ວນຕ່າງໆໃນປະເທດກຣີກ (1 ທສນ 3:1–2).

## 30. ໂກຣິນໂທ



ໂກຣິນໂທເປັນເມືອງໃຫຍ່ຂອງແຂວງອະຂາຍາຂອງຊາວໂຣມ. ມັນຕັ້ງຢູ່ຄໍຄອດທີ່ຕໍ່ ເປໂລໂປເນຊັດ ໃສ່ກັບແຜ່ນດິນໃຫຍ່ຂອງປະເທດກຣີກ, ໂດຍມີທ່າເຮືອຢູ່ທັງຟາກຕາເວັນອອກ ແລະ ຟາກຕາເວັນຕົກ. ມັນເປັນເມືອງທ່ານ້ຳທີ່ຮັ່ງມີ ແລະ ມີອິດທິພົນຫລາຍ.

*ເຫດການທີ່ສຳຄັນ:* ໂປໂລໄດ້ອາໄສຢູ່ເມືອງໂກຣິນໂທໜຶ່ງປີ ແລະ ຫົກເດືອນ ແລະ ໄດ້ຈັດຕັ້ງສາດສະໜາຈັກຂຶ້ນຢູ່ບ່ອນນີ້ (ກຈກ 18:1–18). ໂປໂລໄດ້ຂຽນຈົດໝາຍຫລາຍສະບັບໄປຫາສະມາຊິກຂອງສາດສະໜາຈັກຢູ່ໃນເຂດໂກຣິນໂທ, ຊຶ່ງຕອນນີ້ສອງສະບັບໃນນັ້ນມີຢູ່ໃນພຣະຄຳພີໃໝ່ (1 ແລະ 2 ໂກຣິນໂທ). ສານເຖິງຊາວໂຣມ ອາດຖືກຂຽນຈາກເມືອງໂກຣິນໂທນີ້.

## 31. ເອເຟໂຊ



ໂຮງລະຄອນຮ້າງຂອງຊາວກຣີກ ທີ່ເມືອງເອເຟໂຊ, ບ່ອນທີ່ອັກຄະສາວົກໂປໂລໄດ້ສັ່ງສອນ. ລະຫວ່າງສະໄໝຂອງພຣະຄຳພີໃໝ່, ເມືອງເອເຟໂຊ ເປັນເມືອງທີ່ໂດ່ງດັງໄປທົ່ວໂລກ ເນື່ອງດ້ວຍພຣະວິຫານທີ່ສວຍງາມຂອງມັນ ຊຶ່ງໄດ້ສ້າງຂຶ້ນເພື່ອເປັນກຽດໃຫ້ແກ່ເຈົ້ານາງດາຍແອນນາແຫ່ງເພເກັນ ຂອງຊາວໂຣມ. ບັດນີ້ມັນເຫລືອພຽງຊາກຕຶກພັງ, ຊຶ່ງຄັ້ງໜຶ່ງເມືອງເອເຟໂຊເຄີຍເປັນເມືອງເອກຂອງຊາວໂຣມໃນແຂວງເອເຊຍ ແລະ ເປັນສູນການຄ້າແຫ່ງໃຫຍ່. ຊ່າງຕີເງິນຢູ່ໃນເມືອງນີ້ ມີລາຍໄດ້ທີ່ດີ ໂດຍການຂາຍຮູບຄວັດຂອງດາຍແອນນາ.

*ເຫດການທີ່ສຳຄັນ:* ອັກຄະສາວົກໂປໂລໄດ້ໄປຢ້ຽມຢາມເມືອງເອເຟໂຊ ໃກ້ທ້າຍການເດີນທາງສອນສາດສະໜາເທື່ອທີສອງຂອງເພິ່ນ (ກຈກ 18:18–19). ໃນການເດີນທາງເທື່ອທີສາມຂອງເພິ່ນ, ເພິ່ນໄດ້ອາໄສຢູ່ເມືອງນີ້ສອງປີ. ເພິ່ນໄດ້ຖືກບັງຄັບໃຫ້ໜີໄປ ເພາະການຮ້ອງໂຮສະແດງຄວາມບໍ່ພໍໃຈຂອງຊ່າງຕີເງິນ ທີ່ເສຍລາຍໄດ້ ເພາະໂປໂລໄດ້ສັ່ງສອນຕໍ່ຕ້ານການນະມັດສະການເຈົ້ານາງດາຍແອນນາທີ່ຈອມປອມ (ກຈກ 19:1, 10, 23–41; 20:1). ໂຮງລະຄອນຂອງເມືອງເອເຟໂຊ ເປັນການສ້າງຂອງຊາວກຣີກທີ່ໃຫຍ່ທີ່ສຸດ ແລະ ຢູ່ທີ່ນັ້ນເພື່ອນຮ່ວມງານຂອງໂປໂລ ໄດ້ປະເຊີນກັບພວກກໍ່ຄວາມວຸ້ນວາຍ (ກຈກ 19:29–31). ໂປໂລໄດ້ຂຽນສານເຖິງສະມາຊິກຂອງສາດສະໜາຈັກທີ່ເມືອງເອເຟໂຊ ໃນໄລຍະທີ່ເພິ່ນຖືກຄຸມຂັງຢູ່ກຸງໂຣມ. ສາຂາໜຶ່ງໃນເຈັດສາຂາຂອງສາດສະໜາຈັກ ໃນເອເຊຍ ທີ່ໜັງສືພຣະນິມິດກ່າວເຖິງ ແມ່ນຕັ້ງຢູ່ໃນເມືອງເອເຟໂຊນີ້ (ພນມ 1:10–11; 2:1).

**32. ເກາະປັດໂມ**



ປັດໂມ, ເກາະ ໜຶ່ງ ໃນ ທະເລ ແອເຈອານ ບ່ອນ ທີ່ ໂຢຮັນຖືກເນລະເທດ (ພນມ 1:9). ຕາມທີ່ບອກເລົ່າກັນມາ, ເພິ່ນມີອາຊີບເປັນຊ່າງຕັດຫີນ.

*ເຫດ ການ ທີ່ສຳ ຄັນ:* ໂຢຮັນ ໄດ້ເຫັນພາບນິມິດທີ່ຍິ່ງໃຫຍ່ ຊຶ່ງຮູ້ຈັກກັນວ່າເປັນ ໜັງສືນິມິດ (ໜັງສືພຣະນິມິດ). ພຣະຜູ້ເປັນເຈົ້າໄດ້ບອກເພິ່ນໃຫ້ສົ່ງມັນໄປໃຫ້ສາດສະໜາຈັກເຈັດແຫ່ງໃນເອເຊຍ (ພນມ 1:11).

# ແຜນທີ່ປະຫວັດສາດຂອງສາດສະໜາຈັກ

ແຜນທີ່ດັ່ງຕໍ່ໄປນີ້ ສາມາດຊ່ວຍທ່ານໃຫ້ເຂົ້າໃຈຫລາຍຂຶ້ນກ່ຽວກັບປະຫວັດສາດຕອນຕົ້ນຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ ແລະ ພຣະຄຳພີທີ່ເປີດເຜີຍຜ່ານທາງສາດສະດາໂຈເຊັບ ສະມິດ ແລະ ຜູ້ສືບຕຳແໜ່ງຫລັງຈາກເພິ່ນ. ການຮູ້ຈັກພູມິສາດຂອງແຜ່ນດິນ ທີ່ກ່າວເຖິງໃນພຣະຄຳພີ, ທ່ານຈະສາມາດເຂົ້າໃຈຫລາຍຂຶ້ນ ກ່ຽວກັບເຫດການທີ່ໄດ້ເກີດຂຶ້ນໃນພຣະຄຳພີ.

## ສະຫລຸບ ແລະ ເຄື່ອງໝາຍໃຊ້ແທນ

ເສັ້ນຂີດອ້ອມຢູ່ໃນແຜນທີ່ຂ້າງລຸ່ມນີ້ ບົ່ງບອກເຖິງບໍລິເວນຂອງແຜນທີ່ແຕ່ລະໃບທີ່ໝາຍເລກໄວ້. ແຜນທີ່ເຫລົ່ານີ້ປະກອບດ້ວຍພາກພື້ນອັນກວ້າງໃຫຍ່ ລວມທັງບໍລິເວນພື້ນທີ່ທາງພູມິສາດ ຊຶ່ງເປັນບໍລິເວນຈຳກັດທີ່ນ້ອຍໆ.

1. ພາກຕາເວັນອອກສ່ຽງເໜືອຂອງສະຫະລັດອາເມຣິກາ
2. ພາໄມຣາ-ແມນເຈດ ສະເຕີ, ນິວຢອກ, 1820–1831
3. ນິວຢອກ, ເພັນໂຊເວເນຍ, ແລະ ເຂດໂອໄຮໂອ ຂອງສະຫະລັດອາເມຣິກາ
4. ເຄີດແລນ, ໂອໄຮໂອ, 1830–1838
5. ມີເຊີຣີ, ອິລິນອຍ, ແລະ ເຂດໄອໂອວາ ຂອງສະຫະລັດອາເມຣິກາ
6. ການເດີນທາງຂອງສາດສະໜາຈັກໄປຫາພາກຕາເວັນຕົກ
7. ແຜນທີ່ໂລກ




ຕໍ່ໄປນີ້ແມ່ນເຄື່ອງໝາຍໃຊ້ແທນ ເພື່ອຈະໄດ້ເຂົ້າໃຈເຄື່ອງໝາຍທີ່ແຕກຕ່າງກັນ ແລະ ຂະໜາດຂອງຕົວພິມທີ່ໃຊ້ໃນແຜນທີ່. ນອກເໜືອຈາກນີ້, ແຜນທີ່ແຕ່ລະໃບຍັງມີເຄື່ອງໝາຍໃຊ້ແທນ ພ້ອມດ້ວຍຄຳອະທິບາຍຂອງເຄື່ອງໝາຍເພີ່ມເຕີມ ທີ່ກ່ຽວກັບແຜນທີ່ນັ້ນໂດຍສະເພາະ.

| | |
|---|---|
| ■ | ເຄື່ອງໝາຍ ສີ່ຫລ່ຽມ ມົນ ທົບ ສີ ນ້ຳໝາກກ້ຽງ ໝາຍເຖິງອາຄານ, ຮ້ານຄ້າ, ຫລື ຮູບຮ່າງອື່ນໆຂອງເມືອງ. |
| ● | ຈຸດສີແດງ ໝາຍເຖິງເມືອງ ຫລື ໝູ່ບ້ານ. |
| *ມະຫາສະໝຸດແອັດແລນຕິກ* | ຂະ ໜາດ ຂອງ ຕົວ ພິມ ນີ້ ຖືກ ໃຊ້ເພື່ອໝາຍພູມິສາດຂອງສະຖານທີ່ຕ່າງໆ ເຊັ່ນ ອ່າວທະເລສາບ, ແມ່ນ້ຳ, ພູຜາ, ຖິ່ນແຫ້ງແລ້ງກັນດານ, ແລະ ຮ່ອມພູ. |
| ພາໄມຣາ | ຂະໜາດ ຂອງ ຕົວ ພິມ ນີ້ ຖືກ ໃຊ້ສຳລັບເມືອງ ແລະ ໝູ່ບ້ານ. |
| **ນິວຢອກ** | ຂະໜາດຂອງຕົວພິມນີ້ ຖືກໃຊ້ສຳລັບການແບ່ງແຍກທາງການເມືອງທີ່ນ້ອຍກວ່າ, ດັ່ງເຊັ່ນ ພາກພື້ນ ແລະ ລັດຂອງສະຫະລັດອາເມຣິກາ ແລະ ເຂດແດນ. |
| **ການາດາ** | ຂະໜາດ ຂອງ ຕົວ ພິມ ນີ້ ຖືກ ໃຊ້ສຳລັບ ການ ແບ່ງແຍກທາງການເມືອງທີ່ໃຫຍ່ກວ່າ, ດັ່ງເຊັ່ນ ປະຊາຊາດ, ປະເທດຊາດ, ແລະ ທະວີບ. |

## 1. ພາກຕາເວັນອອກສ່ຽງເໜືອຂອງສະຫະລັດອາເມຣິກາ




1. **ທອບສ໌ຟຽວ** ບ້ານເກີດຂອງ ໂຈເຊັບ ສະມິດ ຜູ້ພໍ່, ເກີດເມື່ອວັນທີ 12 ເດືອນກໍລະກົດ, 1771.
2. **ກຽວຊຳ** ລູສີ ແມັກ ໄດ້ເກີດຢູ່ບ່ອນນີ້, 8 ກໍລະກົດ, 1775.
3. **ທັນບຣິຈ໌** ໂຈເຊັບ ສະມິດ ຜູ້ພໍ່ ແລະ ລູສີ ແມັກ ໄດ້ແຕ່ງງານຢູ່ບ່ອນນີ້, 24 ມັງກອນ, 1796.
4. **ວິດຕິງແຮມ** ບ້ານເກີດຂອງບຣິກຳ ຢັງ, ເກີດເມື່ອວັນທີ 1 ເດືອນມິຖຸນາ, 1801.
5. **ຮາມໂມນີ** ເອມມາ ເຮວ ໄດ້ເກີດໃນເມືອງຮາມໂມນີ, 10 ກໍລະກົດ, 1804.
6. **ຊາໂຣນ** ໂຈເຊັບ ສະມິດ ຜູ້ລູກ ໄດ້ເກີດຢູ່ບ່ອນນີ້, 23 ທັນວາ, 1805 (ເບິ່ງ ຈສ—ປ 1:3).
7. **ເລບານອນ** ຄອບຄົວສະມິດໄດ້ອາໄສຢູ່ເມືອງເລບານອນ ຈາກປີ 1811 ເຖິງປີ 1813, ໃນໄລຍະທີ່ໂຈເຊັບ ສະມິດ ຜູ້ລູກ ໄດ້ຮັບການຜ່າຕັດຂາຫລາຍເທື່ອ.
8. **ນໍວິກ** ຄອບຄົວສະມິດໄດ້ອາໄສຢູ່ບ່ອນນີ້ ຈາກປີ 1814 ເຖິງປີ 1816 ກ່ອນຍ້າຍໄປເມືອງພາໄມຣາ.
9. **ພາໄມຣາ** ຄອບຄົວສະມິດໄດ້ຍ້າຍມາຢູ່ບ່ອນນີ້ ໃນປີ 1816 (ເບິ່ງ ຈສ—ປ 1:3).

## 2. ພາໄມຣາ-ແມນເຈດສະເຕີ, ນິວຢອກ, 1820–1831




1. **ເຮືອນໄມ້ທ່ອນຂອງໂຈເຊັບ ສະມິດ ຜູ້ພໍ່** ທູດໂມໂຣໄນ ໄດ້ມາປະກົດຕໍ່ ໂຈເຊັບ ສະມິດ ຢູ່ຫ້ອງຊັ້ນເທິງ ຂອງເຮືອນຫລັງນີ້ ໃນວັນທີ 21–22 ເດືອນກັນຍາ, 1823 (ເບິ່ງ ຈສ—ປ 1:29–47).

2. **ບ້ານສວນຂອງໂຈເຊັບ ສະມິດ ຜູ້ພໍ່** ບ້ານສວນທີ່ມີທີ່ດິນຂະໜາດກວ້າງ 40 ເຮັກຕາ ໄດ້ຖືກພັດທະນາໂດຍຄອບຄົວສະມິດ ຈາກປີ 1820 ເຖິງປີ 1829.

3. **ປ່າສັກສິດ** ພາບທີ່ມາໃຫ້ເຫັນຄັ້ງທຳອິດຂອງ ໂຈເຊັບ ສະມິດ ຜູ້ລູກ ໄດ້ເກີດຂຶ້ນຢູ່ໃນປ່າ ໃນເຂດບ້ານສວນຂອງຄອບຄົວສະມິດ ໃນຕົ້ນລະດູໃບໄມ້ປົ່ງຂອງປີ 1820 (ເບິ່ງ ຈສ—ປ 1:11–20).

4. **ເຮືອນ ແອ້ມ ແປ້ນ ຂອງ ໂຈເຊັບ ສະມິດ ຜູ້ພໍ່** ອາລ໌ວິນ ສະມິດ ໄດ້ເລີ່ມຕົ້ນສ້າງເຮືອນຫລັງນີ້ ໃນປີ 1822 ແລະ ຄອບຄົວສະມິດໄດ້ອາໄສຢູ່ ຈາກປີ 1825 ເຖິງປີ 1829.

5. **ພູຄູໂມຣາ** ຢູ່ບ່ອນນີ້ ທູດໂມໂຣໄນ ໄດ້ມອບແຜ່ນຈາລຶກຄຳໃຫ້ແກ່ສາດສະດາໂຈເຊັບ ສະມິດ ໃນວັນທີ 22 ເດືອນກັນຍາ, 1827 (ເບິ່ງ ຈສ—ປ 1:50–54, 59).

6. **ບ້ານສວນຂອງມາຕິນ ແຮຣິສ** ບ້ານສວນແຫ່ງນີ້ໄດ້ຖືກເອົາໄປມັດຈຳ ແລະ ທີ່ດິນບາງສ່ວນໄດ້ຖືກຂາຍໄປ ເພື່ອເອົາເງິນມາຈ່າຍຄ່າການພິມພຣະຄຳພີມໍມອນ.

7. **ຣ້ານພິມ ອີ ບີ ແກຣນດິນ** ພຣະຄຳພີມໍມອນ ຈຳນວນ 5,000 ເຫລັ້ມ ໄດ້ຖືກພິມຢູ່ບ່ອນນີ້ 1829–1830.

8. **ຫ້ວຍແຮັດຕະເວ** ຊຶ່ງສ່ວນຫລາຍຊາວບ້ານດັ້ງເດີມມັກເອີ້ນວ່າ ຫ້ວຍຄຣຸກເກັດ, ໄດ້ມີການບັບຕິສະມາໃຫ້ສະມາຊິກບາງຄົນຂອງສາດສະໜາຈັກລຸ້ນເລີ່ມຕົ້ນ ຢູ່ໃນຫ້ວຍນີ້.

## 3. ນິວຢອກ, ເພັນໂຊເວເນຍ, ແລະ ເຂດໂອໄຮໂອ ຂອງສະຫະລັດອາເມຣິກາ




1. **ຊ້າວເບນບຣິຈ໌** ໂຈເຊັບ ສະມິດ ຜູ້ລູກ ແລະ ເອມມາ ເຮວ ໄດ້ແຕ່ງງານກັນຢູ່ບ່ອນນີ້ ໃນວັນທີ 18 ເດືອນມັງກອນ, 1827 (ເບິ່ງ ຈສ—ປ 1:57).
2. **ໂຄນສະວຽວ** ສາຂາແຫ່ງທຳອິດຂອງສາດສະໜາຈັກ ໄດ້ຖືກຈັດຕັ້ງຂຶ້ນທີ່ບ້ານຂອງໂຈເຊັບ ໄນ້ ຜູ້ພໍ່, ໃນເມືອງໂຄນສະວຽວ, ໃນປີ 1830.
3. **ບ້ານຂອງໂຈເຊັບ ສະມິດ ຜູ້ລູກ ໃນ ຮາມໂມນີ** ພາກສ່ວນໃຫຍ່ຂອງການແປພຣະຄຳພີມໍມອນ ໄດ້ເຮັດສຳເລັດຢູ່ບ່ອນນີ້. ຖານະປະໂລຫິດໄດ້ຖືກຟື້ນຟູຄືນມາໃໝ່ໃກ້ໆທີ່ນັ້ນ ໃນປີ 1829 (ເບິ່ງ ຄພ 13; 128:20; ຈສ—ປ 1:71–72).
4. **ເຟແອດ** ພະຍານ ສາມຄົນ ໄດ້ເຫັນແຜ່ນຈາລຶກຄຳ ແລະ ທູດໂມໂຣໄນຢູ່ບ່ອນນີ້ (ຄພ 17). ການແປພຣະຄຳພີມໍມອນໄດ້ສຳເລັດຢູ່ບ່ອນນີ້ ໃນເດືອນມິຖຸນາ 1829. ສາດສະໜາຈັກໄດ້ຖືກຈັດຕັ້ງຂຶ້ນຢູ່ບ່ອນນີ້ ໃນວັນທີ 6 ເດືອນເມສາ, 1830 (ເບິ່ງ ຄພ 20–21).
5. **ເມນດອນ** ເຮືອນຫລັງທຳອິດຂອງບຣິກຳ ຢັງ ແລະ ຮີເບີ ຊີ ຄິມໂບ.
6. **ເຄີດແລນ** ຜູ້ສອນສາດສະໜາທີ່ໄດ້ຖືກສົ່ງໄປຫາຊາວເລມັນ ໄດ້ຢຸດຢູ່ບ່ອນນີ້ ໃນປີ 1830 ແລະ ໄດ້ໃຫ້ບັບຕິສະມາແກ່ຊິດນີ ຣິກດອນ ແລະ ຄົນອື່ນໆໃນເຂດເມືອງເຄດແລນ. ມັນເປັນສູນກາງໃຫຍ່ຂອງສາດສະໜາຈັກ ຈາກປີ 1831 ເຖິງປີ 1838. ພຣະວິຫານແຫ່ງທຳອິດຂອງຍຸກສະໄໝນີ້ ໄດ້ຖືກສ້າງຂຶ້ນໃນເມືອງເຄີດແລນ ແລະ ໄດ້ຖືກອຸທິດ ໃນວັນທີ 27 ເດືອນມີນາ, 1836 (ເບິ່ງ ຄພ 109).
7. **ຕະຄອງເອຣີ** ສາຂາສາມແຫ່ງຂອງສາດສະໜາຈັກ ໃນລັດນິວຢອກ (ໂຄນສະວຽວ, ເຟແອດ, ແລະ ແມນເຈດສະເຕີ) ໄດ້ອົບພະຍົບໄປທາງຕະຄອງເອຣີ ແລະ ທະເລສາບເອຣີ ເຖິງເມືອງເຄີດແລນ, ລັດໂອໄຮໂອ, ໃນເດືອນເມສາ ແລະ ເດືອນພຶດສະພາ ປີ 1831.
8. **ໄຮຣຳ** ໂຈເຊັບ ແລະ ເອມມາ ໄດ້ອາໄສຢູ່ບ່ອນນີ້ ຈາກເດືອນກັນຍາ ປີ 1831 ເຖິງເດືອນກັນຍາ ປີ 1832. ໂຈເຊັບ ແລະ ຊິດນີ ຣິກດອນ ໄດ້ທຳການແປພຣະຄຣິສຕະທຳຄຳພີຂອງໂຈເຊັບ ສະມິດ (ປຈສ). ການເປີດເຜີຍທີ່ໄດ້ຮັບຢູ່ບ່ອນນີ້: ຄພ 1; 65–71; 73; 76–77; 79–81; 99; 133.
9. **ອາມເຮີດ** ໂຈເຊັບ ສະມິດ ໄດ້ຖືກສະໜັບສະໜູນເປັນປະທານຂອງຖານະປະໂລຫິດສູງ ໃນວັນທີ 25 ເດືອນມັງກອນ, 1832 (ເບິ່ງ ຄພ 75).
10. **ໂທຣອນໂທ** ບ້ານຂອງຈອນ ເທເລີ, ປະທານຄົນທີສາມຂອງສາດສະໜາຈັກ, ແລະ ແມຣີ ຟຽວດິງ ສະມິດ, ພັນລະຍາຂອງໄຮຣຳ ສະມິດ.

## 4. ເຄີດແລນ, ໂອໄຮໂອ, 1830–1838




1. **ບ້ານຂອງນີວເອັນ ເຄ ວິດນີ** ໂຈເຊັບ ແລະ ເອມມາ ໄດ້ອາໄສຢູ່ບ່ອນນີ້ ເປັນເວລາຫລາຍອາທິດ ຫລັງຈາກເຂົາເຈົ້າໄດ້ຍ້າຍໄປເມືອງເຄີດແລນເທື່ອທຳອິດ ໃນປີ 1831. ໂຈເຊັບໄດ້ຮັບການເປີດເຜີຍຫລາຍຢ່າງຢູ່ບ່ອນນີ້.
2. **ບ້ານສວນຂອງໄອຊິກ ມໍລີ** ໂຈເຊັບ ແລະ ເອມມາ ສະມິດ ໄດ້ອາໄສຢູ່ບ່ອນນີ້ ຈາກເດືອນມີນາ ຈົນເຖິງເດືອນກັນຍາ 1831. ມະຫາປະໂລຫິດກຸ່ມທຳອິດ ໄດ້ຖືກແຕ່ງຕັ້ງຢູ່ບ່ອນນີ້. ໂຈເຊັບໄດ້ທຳການແປພຣະຄຣິສຕະທຳຄຳພີຂອງໂຈເຊັບ ສະມິດ (ປຈສ).
3. **ຮ້ານຄ້າຂອງນີວເອັນ ເຄ ວິດນີ** ຝ່າຍປະທານສູງສຸດຂອງສາດສະໜາຈັກ ໄດ້ຮັບຂໍກະແຈຂອງອານາຈັກຢູ່ບ່ອນນີ້. ໂຮງຮຽນຂອງສາດສະດາໄດ້ຖືກຈັດຂຶ້ນຢູ່ບ່ອນນີ້ ໃນລະຫວ່າງລະດູໜາວຂອງປີ 1833. ປຈສ ໄດ້ຢູ່ໃນຂັ້ນຕອນແປໃຫ້ສຳເລັດ ໃນປີ 1833. ໂຈເຊັບ ແລະ ເອມມາ ໄດ້ອາໄສຢູ່ບ່ອນນີ້ ຈາກປີ 1832 ເຖິງປີ 1833. ໂຈເຊັບໄດ້ຮັບການເປີດເຜີຍຫລາຍຢ່າງໃນບ່ອນນີ້.
4. **ໂຮງແຮມຈອນສັນ** ໂຮງແຮມນີ້ໄດ້ບັນຈຸຫ້ອງການພິມບ່ອນທຳອິດໃນເມືອງເຄີດແລນ. *The Evening and the Morning Star* ໄດ້ຖືກພິມຢູ່ບ່ອນນີ້ ຫລັງຈາກໂຮງພິມຢູ່ເຂດແຈັກສັນ, ລັດມີເຊີຣີ ໄດ້ຖືກທຳລາຍ. ອັກຄະສາວົກສິບສອງ ໄດ້ໄປຈາກບ່ອນນີ້ ໃນວັນທີ 4 ເດືອນພຶດສະພາ, 1835, ສຳລັບການເຜີຍແຜ່ເທື່ອທຳອິດຂອງພວກເພິ່ນ.
5. **ບ້ານຂອງໂຈເຊັບ ສະມິດ ຜູ້ລູກ** ໂຈເຊັບ ແລະ ເອມມາ ໄດ້ອາໄສຢູ່ບ່ອນນີ້ ຈາກ ທ້າຍປີ 1833 ເຖິງຕົ້ນປີ 1838. ໄດ້ສຳເລັດການແປໜັງສືອັບຣາຮາມ, ແລະ ໂຈເຊັບໄດ້ຮັບການເປີດເຜີຍຫລາຍຢ່າງ ຢູ່ບ່ອນນີ້.
6. **ຫ້ອງການພິມ** *Lectures on Faith* ໄດ້ຖືກສົ່ງມາຫາອາຄານບ່ອນນີ້. ອັກຄະສາວົກສິບສອງ ແລະ ສາວົກເຈັດເສິບກຸ່ມທີໜຶ່ງໄດ້ຖືກເອີ້ນ ແລະ ໄດ້ຮັບການແຕ່ງຕັ້ງຢູ່ບ່ອນນີ້. ຄຳສອນ ແລະ ພັນທະສັນຍາ (ຊຸດພິມທຳອິດ), ພຣະຄຳພີມໍມອນ (ຊຸດພິມທີສອງ), *The Evening and the Morning Star, Latter Day Saints' Messenger and Advocate,* ແລະ *Elders' Journal* ສະບັບທຳອິດ ໄດ້ຖືກພິມຢູ່ບ່ອນນີ້.
7. **ພຣະວິຫານເຄີດແລນ** ພຣະວິຫານແຫ່ງນີ້ ໄດ້ເປັນພຣະວິຫານແຫ່ງທຳອິດໃນຍຸກສະໄໝນີ້. ພຣະເຢຊູຄຣິດໄດ້ມາປະກົດ ແລະ ໄດ້ຮັບເອົາພຣະວິຫານ. ໂມເຊ, ອີລາຍ, ແລະ ເອລີຢາ ໄດ້ມາປະກົດ ແລະ ໄດ້ຟື້ນຟູຂໍກະແຈສະເພາະໃດໜຶ່ງຂອງຖານະປະໂລຫິດ (ເບິ່ງ ຄພ 110). ໂຮງຮຽນຂອງສາດສະດາ ກໍໄດ້ຖືກຈັດຂຶ້ນຢູ່ບ່ອນນີ້. ການເປີດເຜີຍທີ່ໄດ້ຮັບຢູ່ບ່ອນນີ້: ຄພ 109–110; 137.

**ເຄີດແລນ** ໃນວັນທີ 17 ເດືອນສິງຫາ, 1835, ຄຳສອນ ແລະ ພັນທະສັນຍາ ໄດ້ຖືກຮັບຮູ້ວ່າເປັນ ພຣະຄຳພີ. ການເປີດເຜີຍທີ່ໄດ້ຮັບໃນເຄີດແລນ ແມ່ນຮ່ວມຢູ່ໃນ ຄພ 41–50; 52–56; 63–64; 72; 78; 84–98; 101–104; 106–110; 112; 134; ແລະ 137. ພາກທີ 104 ບອກເຖິງການມອບໝາຍຊັບສິນໃດໜຶ່ງໂດຍສະເພາະ ເພື່ອໃຫ້ສະມາຊິກຂອງສາດສະໜາຈັກ ທີ່ເຂົ້າຮ່ວມໃນລະບົບເອກະພາບ ເປັນຜູ້ພິທັກຮັກສາ (ເບິ່ງ ຂໍ້ທີ 19–46).

## 5. ມີເຊີຣີ, ອີລີນອຍ, ແລະ ເຂດໄອໂອວາ ຂອງສະຫະລັດອາເມຣິກາ




1. **ອິນດີເພັນເດັນສ໌** ເປັນສູນກາງໃຫຍ່ຂອງຊີໂອນ (ເບິ່ງ ຄພ 57:3). ສະຖານທີ່ສ້າງພຣະວິຫານໄດ້ຖືກອຸທິດໃນວັນທີ 3 ເດືອນສິງຫາ, 1831. ໄພ່ພົນຂອງພຣະເຈົ້າໄດ້ຖືກຂັບໄລ່ອອກຈາກເຂດແຈັກສັນ ໃນປີ 1833.
2. **ແມ່ນ້ຳຟິດຊິງ** ໂຈເຊັບ ສະມິດ ແລະ ຄ້າຍຊີໂອນ ໄດ້ເດີນທາງຈາກເມືອງເຄີດແລນ, ລັດໂອໄຮໂອ, ໄປຫາລັດມີເຊີຣີ ໃນປີ 1834 ເພື່ອຊ່ວຍໄພ່ພົນຍຸກສຸດທ້າຍກັບໄປອາໄສຢູ່ໃນທີ່ດິນຂອງຕົນ ຢູ່ໃນເຂດແຈັກສັນ. ຄພ 105 ໄດ້ຖືກເປີດເຜີຍຢູ່ແຄມແມ່ນ້ຳສາຍນີ້.
3. **ຟາແວັດ** ເມືອງນີ້ ແມ່ນບ່ອນຕັ້ງຖິ່ນຖານແຫ່ງໃຫຍ່ສຸດຂອງຊາວມໍມອນໃນລັດມີເຊີຣີ. ສະຖານທີ່ ສຳລັບການສ້າງພຣະວິຫານ ໄດ້ຖືກອຸທິດ ຢູ່ເມືອງນີ້ (ເບິ່ງ ຄພ 115). ຢູ່ເມືອງນີ້ ໃນວັນທີ 8 ເດືອນກໍລະກົດ, 1838, ກຸ່ມອັກຄະສາວົກສິບສອງ ໄດ້ຮັບການເອີ້ນຈາກພຣະຜູ້ເປັນເຈົ້າ ໃຫ້ໄປຮັບໃຊ້ເຜີຍແຜ່ຢູ່ໃນໝູ່ເກາະເຂດອັງກິດ (ເບິ່ງ ຄພ 118).
4. **ອາດາມ-ອອນໄດ-ອາມັນ** ພຣະຜູ້ເປັນເຈົ້າໄດ້ບອກສະຖານທີ່ແຫ່ງນີ້ ທີ່ຕັ້ງຢູ່ທາງເໜືອຂອງລັດມີເຊີຣີ ວ່າເປັນບ່ອນເຕົ້າໂຮມແຫ່ງໃຫຍ່ ເມື່ອພຣະເຢຊູຄຣິດສະເດັດມາຫາອາດາມ ແລະ ເຊື້ອສາຍທີ່ຊອບທຳຂອງເພິ່ນ (ເບິ່ງ ຄພ 78:15; 107:53–57; 116).
5. **ຄຸກລິເບີຕີ** ໂຈເຊັບ ສະມິດ ແລະ ຄົນອື່ນໆ ໄດ້ຖືກຄຸມຂັງຢ່າງບໍ່ຍຸດຕິທຳຢູ່ຄຸກນີ້ ຈາກເດືອນທັນວາ ປີ 1838 ເຖິງເດືອນເມສາ ປີ 1839. ໃນທ່າມກາງເວລາທີ່ຫຍຸ້ງຍາກທີ່ສຸດສຳລັບສາດສະໜາຈັກ, ໂຈເຊັບໄດ້ເອີ້ນຫາພຣະຜູ້ເປັນເຈົ້າ ເພື່ອຂໍການຊີ້ນຳ ແລະ ກໍໄດ້ຮັບ ຄພ 121–123.
6. **ນາວູ** ຕັ້ງຢູ່ໃກ້ແມ່ນ້ຳມິດຊີຊິບປີ, ເຂດນີ້ ເປັນສະຖານທີ່ເຕົ້າໂຮມໄພ່ພົນຂອງພຣະເຈົ້າ ຈາກປີ 1839 ເຖິງປີ 1846. ຢູ່ບ່ອນນີ້ ພຣະວິຫານໄດ້ຖືກສ້າງຂຶ້ນ, ແລະ ພິທີການດັ່ງເຊັ່ນ ການບັບຕິສະມາແທນຄົນຕາຍ, ການຮັບຂອງປະທານສັກສິດ, ແລະ ການຜະນຶກສາມີພັນລະຍາເຂົ້າກັນ ໄດ້ເລີ່ມຕົ້ນ. ຢູ່ບ່ອນນີ້ ສະມາຄົມສະຕີສົງເຄາະ ໄດ້ຖືກຈັດຕັ້ງຂຶ້ນ ໃນປີ 1842. ການເປີດເຜີຍທີ່ໄດ້ຮັບ ແມ່ນຮ່ວມດ້ວຍ ຄພ 124–129.
7. **ຄາດເທດ** ຢູ່ບ່ອນນີ້ ສາດສະດາໂຈເຊັບ ສະມິດ ແລະ ໄຮຣຳ ອ້າຍຂອງເພິ່ນ ໄດ້ຖືກຂ້າຍ້ອນຄວາມເຊື່ອ ໃນວັນທີ 27 ເດືອນມິຖຸນາ, 1844 (ເບິ່ງ ຄພ 135).
8. **ວິນເຕີຄວດເຕີສ໌** ສະຖານທີ່ພັກເຊົາຊົ່ວຄາວແຫ່ງໃຫຍ່ທີ່ສຸດສຳລັບໄພ່ພົນຂອງພຣະເຈົ້າ (1846–1848) ໃນເສັ້ນທາງໄປສູ່ຮ່ອມພູເຊົາເລັກ. ຄ້າຍອິດສະຣາເອນໄດ້ຖືກຈັດຕັ້ງຂຶ້ນ ສຳລັບການເດີນທາງໄປຫາພາກຕາເວັນຕົກ (ເບິ່ງ ຄພ 136).
9. **ຄັນໄຊ ບລັບສ໌ (ເຄນສະວຽວ)** ຝ່າຍປະທານສູງສຸດ ໄດ້ຮັບການສະໜັບສະໜູນຢູ່ບ່ອນນີ້ ໃນວັນທີ 27 ເດືອນທັນວາ, 1847, ໂດຍມີ ບຣິກຳ ຢັງ ເປັນປະທານ.

# 6. ການເດີນທາງຂອງສາດສະໜາຈັກໄປຫາພາກຕາເວັນຕົກ




1. **ເຟແອດ** ສາດສະດາໂຈເຊັບ ສະມິດ ໄດ້ໜີຈາກເມືອງເຟແອດ ໄປຫາເມືອງເຄີດແລນ, ລັດໂອໄຮໂອ, ໃນເດືອນມັງກອນ ປີ 1831. ສາຂາສາມແຫ່ງໃນນິວຢອກ (ເຟແອດ, ໂຄນສະວຽວ, ແລະ ແມນເຈດສະເຕີ) ໄດ້ຕິດຕາມໄປໃນເດືອນເມສາ ແລະ ເດືອນພຶດສະພາ ປີ 1831 ພາຍໃຕ້ພຣະບັນຊາຂອງພຣະຜູ້ເປັນເຈົ້າ ເພື່ອໃຫ້ໄປເຕົ້າໂຮມກັນ (ເບິ່ງ ຄພ 37–38).
2. **ເຄີດແລນ** ສູນກາງໃຫຍ່ແຫ່ງທຳອິດຂອງສາດສະໜາຈັກ ແມ່ນຕັ້ງຢູ່ໃນເມືອງເຄີດແລນ ຈາກປີ 1831 ເຖິງປີ 1838.
3. **ອິນດີເພັນເດັນສ໌** ພຣະຜູ້ເປັນເຈົ້າໄດ້ແຈ້ງບອກອິນດີເພັນເດັນສ໌ (ໃນເຂດແຈັກສັນ, ລັດມີເຊີຣີ) ໃຫ້ເປັນສູນກາງຂອງຊີໂອນ ໃນເດືອນກໍລະກົດ ປີ 1831 (ເບິ່ງ ຄພ 57:3). ກຸ່ມອັນຕະພານໄດ້ບັງຄັບໄພ່ພົນຂອງພຣະເຈົ້າ ໃຫ້ອອກຈາກເຂດແຈັກສັນ ໃນເດືອນພະຈິກ ປີ 1833.
4. **ລິເບີຕີ** ໄພ່ພົນຂອງພຣະເຈົ້າຈາກເຂດແຈັກສັນ ໄດ້ເຕົ້າໂຮມກັນຢູ່ເຂດຄະເລ ຈາກປີ 1833 ເຖິງປີ 1836, ເມື່ອເຂົາເຈົ້າໄດ້ຖືກຮຽກຮ້ອງໃຫ້ໜີໄປອີກ. ສາດສະດາໂຈເຊັບ ສະມິດ ແລະ ທ້າຄົນອື່ນອີກ ໄດ້ຖືກຈັບເຂົ້າຄຸກຢ່າງບໍ່ຍຸດຕິທຳ ຢູ່ບ່ອນນີ້ ຈາກເດືອນທັນວາ ປີ 1838 ເຖິງເດືອນເມສາ ປີ 1839.
5. **ຟາແວ໊ດ** ໄດ້ຕັ້ງສະຖານທີ່ພັກເຊົາຢູ່ບ່ອນນີ້ສຳລັບໄພ່ພົນຂອງພຣະເຈົ້າ ຈາກປີ 1836–1838. ມັນເປັນສູນກາງໃຫຍ່ຂອງສາດສະໜາຈັກ ໃນປີ 1838. ໃນປີ 1838–1839 ໄພ່ພົນຂອງພຣະເຈົ້າ ໄດ້ຖືກບັງຄັບໃຫ້ໜີໄປຫາລັດອີລີນອຍ.
6. **ນາວູ** ສູນກາງໃຫຍ່ຂອງສາດສະໜາຈັກ ຈາກປີ 1839–1846. ຫລັງຈາກການສັງຫານສາດສະດາ ແລະ ໄຮຣຳ ອ້າຍຂອງເພິ່ນ, ໄພ່ພົນຂອງພຣະເຈົ້າໄດ້ຍ້າຍໄປຫາພາກຕາເວັນຕົກ.
7. **ຄັນໄຊ ບລັບສ໌** ຜູ້ບຸກເບີກໄດ້ມາເຖິງບ່ອນນີ້ ໃນເດືອນມິຖຸນາ ປີ 1846. ສະມາຊິກໃນກອງທັບມໍມອນ ໄດ້ຈາກໄປ ໃນວັນທີ 21 ເດືອນກໍລະກົດ, 1846, ພາຍໃຕ້ການນຳພາຂອງ ເຈມສ໌ ອາເລນ.
8. **ວິນເຕີຄວດເຕີສ໌** ສະຖານທີ່ພັກເຊົາຊົ່ວຄາວແຫ່ງສຳຄັນ, ຈາກປີ 1846–1848. ຂະບວນລົດວຽນແອນກາດ ພາຍໃຕ້ການນຳພາຂອງປະທານບຣິກຳ ຢັງ ໄດ້ອອກເດີນທາງໄປຫາພາກຕາເວັນຕົກ ໃນເດືອນເມສາ ປີ 1847.
9. **ຄ້າຍລິເວັນເວີດ** ກອງທັບມໍມອນໄດ້ມາຮ່ວມກັນຢູ່ບ່ອນນີ້ ກ່ອນເລີ່ມຕົ້ນອອກເດີນທາງໄປພາກຕາເວັນຕົກ ໃນເດືອນສິງຫາ ປີ 1846.
10. **ແຊນຕາເຟ** ຟີລິບ ຄຸກ ໄດ້ເປັນຜູ້ບັນຊາການກອງທັບມໍມອນ ໃນຂະນະທີ່ເຂົາເຈົ້າເດີນທາງຈາກບ່ອນນີ້ ໃນວັນທີ 19 ເດືອນຕຸລາ, 1846.
11. **ປວຍບະໂລ** ທະຫານສາມຄົນທີ່ເຈັບປ່ວຍຂອງກອງທັບມໍມອນ ໄດ້ຖືກສັ່ງໃຫ້ໄປເມືອງປວຍບະໂລ ເພື່ອຮັບການປິ່ນປົວ, ບ່ອນທີ່ເຂົາເຈົ້າໄດ້ພັກເຊົາຢູ່ໃນລະດູໜາວ ຈາກປີ 1846–1847 ຢູ່ນຳໄພ່ພົນຂອງພຣະເຈົ້າ ຈາກລັດມິດຊີຊິບປີ. ຂະບວນເຫລົ່ານີ້ ໄດ້ມາເຖິງຫ່ອມພູເຊົາເລັກໃນເດືອນກໍລະກົດ ປີ 1847.
12. **ແຊນດິເອໂກ** ກອງທັບມໍມອນໄດ້ສຳເລັດການເດີນທາງ 3,200 ກິໂລແມັດ ເມື່ອມາເຖິງເມືອງນີ້ ໃນວັນທີ 29 ເດືອນມັງກອນ, 1847.
13. **ລອສ໌ ແອນໂຈເລັສ໌** ກອງທັບມໍມອນໄດ້ຖືກປົດຈາກໜ້າທີ່ຢູ່ເມືອງນີ້ ໃນວັນທີ 16 ເດືອນກໍລະກົດ, 1847.
14. **ສັກກຣາເມັນໂຕ** ອະດີດທະຫານມໍມອນບາງຄົນໄດ້ທຳງານຢູ່ເມືອງນີ້ ແລະ ຢູ່ໂຮງສີຊັດເທີ ທີ່ຫ່າງໄກທາງທິດຕາເວັນອອກ ແຄມແມ່ນ້ຳອາເມຣິກັນ. ເຂົາເຈົ້າກໍຢູ່ທີ່ນັ້ນ ຕອນມີການຄົ້ນພົບຄຳ ໃນເດືອນມັງກອນ ປີ 1848.
15. **ເມືອງເຊົາເລັກ** ສູນກາງໃຫຍ່ຂອງສາດສະໜາຈັກ ຈາກປີ 1847 ເຖິງປະຈຸບັນ. ທ່ານບຣິກຳ ຢັງ ໄດ້ມາເຖິງຮ່ອມພູເມືອງເຊົາເລັກ ໃນວັນທີ 24 ເດືອນກໍລະກົດ, 1847.

## 7. ແຜນທີ່ໂລກ


1
2
3
4
ກ
ຂ
ຄ
ງ
ຈ
ສ
ຊ
ຍ
ມະຫາສະໝຸດ ປາຊີຟິກເໜືອ
ອາເມຣິກາ ເໜືອ
ມະຫາສະໝຸດ ແອັດແລນຕິກເໜືອ
ເອີຣົບ
ເອເຊຍ
ມະຫາສະໝຸດ ປາຊີຟິກເໜືອ
ອາເມຣິກາກາງ
ອາຟຣິກາ
ມະຫາສະໝຸດ ປາຊີຟິກ
ອາເມຣິກາໃຕ້
ມະຫາສະໝຸດ ອິນເດຍ
ອົດສະຕາລີ
ມະຫາສະໝຸດ ປາຊີຟິກໃຕ້
ມະຫາສະໝຸດ ແອັດແລນຕິກໃຕ້
ໜ
ອານຕາຕິກາ

## ດັດຊະນີແຜນທີ່ປະຫວັດສາດຂອງສາດສະໜາຈັກ

ດັດຊະນີແຜນທີ່ ສາມາດຊ່ວຍທ່ານຊອກຫາສະຖານທີ່ແຕ່ລະແຫ່ງ ຢູ່ໃນແຜນທີ່. ແຕ່ລະສະຖານທີ່ແມ່ນຮ່ວມດ້ວຍເລກແຜນທີ່ ຊຶ່ງຕິດຕາມດ້ວຍຂໍ້ອ້າງອີງໃນເສັ້ນຕັດກັນ ຢູ່ເທິງແຜນທີ່ ທີ່ປະກອບດ້ວຍຕົວອັກສອນ ແລະ ຕົວເລກ. ຍົກຕົວຢ່າງ, ສະຖານທີ່ສຳລັບ ຄ້າຍ ຣອລ໌ ແມ່ນ 6:ຂ1—ນັ້ນຄື, ແຜນທີ່ 6, ໃນມຸມສາກ ຂ1. ທ່ານສາມາດຊອກຫາມຸມສາກໃດໜຶ່ງໂດຍສະເພາະໄດ້ ຢູ່ໃນແຜນທີ່ ໂດຍການປະສານສົ້ນເທິງ ແລະ ທາງຂ້າງຂອງແຜນທີ່ເຂົ້າກັນ. ຊື່ອື່ນອີກຂອງສະຖານທີ່ ໄດ້ຖືກລະບຸໄວ້ຢູ່ໃນວົງເລັບ; ຍົກຕົວຢ່າງ, ຄັນໄຊ ບລັບສ໌ (ເຄນສະວຽວ).


ກາເດັນໂກຣບ, ໄອໂອວາ, 5:ງ1
ການາດາ, 1:ຄ1, 3:ຄ3, 6:ສ1
ກາລາຕິນ, ມີເຊີຣີ, 5:ງ3
ເກຣດເຊົາເລັກ, 6:ຂ2
ແກຣນດິນ, ອີ ບີ ຮ້ານພິມ, ພາໄມຣາ, 2:ຄ2
ກຽວຊຳ, ນິວແຮມເຊີ, 1:ງ2

ເຂດຂອງຊາວອິນເດຍແດງ, 5:ຂ2, 6:ງ1, 6:ງ3
ເຂດແຈັກສັນ, ມີເຊີຣີ, 5:ງ4
ເຂດເຜີຍແຜ່ເຊັ້ນຫລຸຍເຣ, 6:ຂ4
ເຂດເວນ, ນິວຢອກ, 2:ກ3, 2:ງ3
ເຂດອໍເຣກອນ, 6:ກ1
ເຂດອອນແທຣີໂອ, ນິວຢອກ, 2:ກ3, 2:ງ3

ຄັນໄຊ ບລັບສ໌ (ເຄນສະວຽວ), ໄອໂອວາ, 5:ຄ1, 6:ຈ2
ຄ້າຍບຣິດເຈີ, 6:ຄ2
ຄ້າຍລາຣາມີ, 6:ຄ2
ຄ້າຍລີເວັນເວີດ, 5:ງ4, 6:ຈ2
ຄ້າຍຣອລ໌, 6:ຂ1
ຄາດເທດ, ອີລີນອຍ, 5:ຊ2
ແຄລີໂຟເນຍ, 6:ກ3
ໂຄນສະວຽວ, ນິວຢອກ, 1:ຂ3, 3:ຍ3
ເຄີດແລນ, 4:ຂ1
ເຄີດແລນ, ໂອໄຮໂອ, 3:ຄ3, 6:ສ1
ຄລີບແລນ, ໂອໄຮໂອ, 3:ຄ4
ຄວິນສີ, ອີລີນອຍ, 5:ຊ2, 6:ຈ2
ຄອນເນຕິກັດ, 1:ຄ3

ສັກກຣາເມັນໂຕ, 6:ກ2
ສະຖານທີ່ບັບຕິສະມາ, ເຄີດແລນ, 4:ຂ2
ສະປຣິງຟຽວ, ອີລີນອຍ, 5:ຍ2
ສະມິດ, ໂຈເຊັບ ຜູ້ພໍ່, ບ້ານສວນ, ເຂດພາໄມຣາ, 2:ຂ3
ສະມິດ, ໂຈເຊັບ ຜູ້ພໍ່, ເຮືອນທ່ອນໄມ້, ເຂດພາໄມຣາ, 2:ຂ3
ສະມິດ, ໂຈເຊັບ ຜູ້ພໍ່, ເຮືອນແອ້ມແປ້ນ, ເຂດພາໄມຣາ, 2:ຂ3
ສະມິດ, ໂຈເຊັບ ຜູ້ລູກ, ບ້ານ, 3:ຍ3, 4:ຂ3
ສະມິດ, ໂຈເຊັບ ຜູ້ລູກ, ຮ້ານຄ້າທົ່ວໄປ, ເຄີດແລນ, 4:ຂ3
ສະມິດ, ອາລ໌ວິນ, ຫລຸມຝັງສົບ, ພາໄມຣາ, 2:ຄ2
ສະມິດ, ໄຮຣຳ, ບ້ານ, ເຄີດແລນ, 4:ຂ4

ຊາເລັມ, ມາສາຊູເສດສ໌, 1:ງ3
ຊາໂຣນ, ເວີໝ້ອນ, 1:ຄ2
ຊ້າວເບນບຣິຈ໌, ນິວຢອກ, 1:ຂ3, 3:ຍ3
ເຊັ້ນຫລຸຍ, ມີເຊີຣີ, 5:ຍ4
ແຊນດິເອໂກ, 6:ຂ4
ແຊນຕາເຟ, 6:ຄ3
ແຊນເບີນາດີໂນ, 6:ຂ3
ແຊນແຟຣນຊີສະໂກ, 6:ກ2

ດີວິດ, ມີເຊີຣີ, 5:ຈ4

ຕະຄອງເອຣີ, ນິວຢອກ, 2:ກ2, 3:ສ1

ຖະໜົນຄາວເດີຣີ, ເຄີດແລນ, 4:ກ3
ຖະໜົນແຄນັນໄດກົວ, ເຂດພາໄມຣາ, 2:ຄ3
ຖະໜົນໂຈເຊັບ, ເຄີດແລນ, 4:ກ4
ຖະໜົນສະແຕບຝອດ, ເຂດພາໄມຣາ, 2:ຂ4
ຖະໜົນຊີລີໂກດ, ເຄີດແລນ, 4:ຂ4
ຖະໜົນຝ໊ອກ, ເຂດພາໄມຣາ, 2:ກ3
ຖະໜົນມາໂກ, ເຄີດແລນ, 4:ກ2
ຖະໜົນວິດນີ, ເຄີດແລນ, 4:ກ3
ຖະໜົນໂຮງຮຽນອາມີງຕັນ, ເຂດພາໄມຣາ, 2:ງ3

ທະນາຄານ, ເຄີດແລນ, 4:ຂ4
ທະເລສາບເອຣີ, 3:ງ3
ທະເລສາບຮູໂຣນ, 3:ຄ1
ທະເລສາບອອນແທຣີໂອ, 1:ກ2, 3:ສ1
ທັນບຣິຈ໌, ເວີໝ້ອນ, 1:ຄ2
ທາງແຄລີໂຟເນຍ, 6:ຂ2
ທາງໂຄ້ງມີກລາເວນ, ມີເຊີຣີ, 5:ຈ4
ທູສັນ, 6:ຂ4
ໂທຣອນໂທ, ການາດາ, 3:ຈ1
ທອບສ໌ຟຽວ, ມາສາຊູເສດສ໌, 1:ງ3
ທອມສັນ, ໂອໄຮໂອ, 3:ງ3

ນາວູ, ອີລີນອຍ, 5:ສ1, 6:ຈ2
ນິວເຈີຊີ, 1:ຂ4
ນິວຢອກ, 1:ຂ3, 3:ຈ3, 6:ຊ1
ນິວແຮມເຊີ, 1:ງ2
ນໍວິກ, ເວີໝ້ອນ, 1:ງ2
ໄນ້, ໂຈເຊັບ, ຜູ້ພໍ່, ບ້ານ, ເມືອງໂຄນສະວຽວ, ນິວຢອກ, 3:ຍ3

ບັບຟາໂລ, ນິວຢອກ, 3:ຈ2
ບອສ໌ຕັນ, ມາສາຊູເສດສ໌, 1:ງ3

ປ່າສັກສິດ, ເຂດພາໄມຣາ, 2:ຂ3
ປ່າຊ້າ, ເຄີດແລນ, 4:ຂ3
ປອຍບະໂລ, 6:ຄ3

ພູຄູໂມຣາ, ເຂດ ພາໄມຣາ, 2:ຄ4
ພູພິສກາ, ໄອໂອວາ, 5:ງ1
ເພັນໂຊເວເນຍ, 1:ກ4, 3:ສ4, 6:ຊ1
ແພຣີສະເບີກ, ນິວຢອກ, 3:ຈ2
ພຣະວິຫານເຄີດແລນ, 4:ຂ4

ຟາແວັດ, ມີເຊີຣີ, 5:ງ3, 6:ຈ2
ເຟແອດ, ນິວຢອກ, 1:ກ3, 3:ຊ2, 6:ຊ1
ຟີລາແດວເຟຍ, ເພັນໂຊເວເນຍ, 1:ຂ4, 6:ຊ2
ຟຣີດົມ, ນິວຢອກ, 3:ສ2

ມະຫາສະໝຸດ ປາຊີຟິກ, 6:ກ1, 7:ຂ3
ມະຫາສະໝຸດ ປາຊີຟິກ ໃຕ້, 7:ກ3
ມະຫາສະໝຸດ ປາຊີຟິກ ເໜືອ, 7:ກ2, 7:ຍ2
ມະຫາສະໝຸດ ອິນເດຍ, 7:ສ3
ມະຫາສະໝຸດ ແອັດແລນຕິກ, 1:ງ4, 6:ຍ2
ມະຫາສະໝຸດ ແອັດແລນຕິກໃຕ້, 7:ງ3
ມະຫາສະໝຸດ ແອັດແລນຕິກເໜືອ, 7:ຄ2
ມາສາຊູເສດສ໌, 1:ຄ3
ມີເຊີຣີ, 5:ສ3, 6:ຈ3
ເມນ, 1:ງ1
ເມນດອນ, ນິວຢອກ, 3:ສ2
ແມ່ນ້ຳການາດາ, 6:ງ3
ແມ່ນ້ຳກີລາ, 6:ຂ4
ແມ່ນ້ຳແກຣນ, ມີເຊີຣີ, 5:ງ2
ແມ່ນ້ຳຄອນເນຕິກັດ, 1:ງ1
ແມ່ນ້ຳສະເນັກ, 6:ຂ1
ແມ່ນ້ຳຊັສຄູຮັນນາ, ເພັນໂຊເວເນຍ, 1:ກ4, 3:ຊ3
ແມ່ນ້ຳແຊຣີຕັນ, ມີເຊີຣີ, 5:ຈ2
ແມ່ນ້ຳເດລາແວ, 1:ຂ4
ແມ່ນ້ຳພະແລັດ, 5:ຂ1
ແມ່ນ້ຳພະແລັດໃຕ້, 6:ຄ2
ແມ່ນ້ຳພະແລັດເໜືອ, 6:ຄ1
ແມ່ນ້ຳເພໂກສ໌, 6:ຄ4
ແມ່ນ້ຳຟິດຊິງ, ມີເຊີຣີ, 5:ງ3
ແມ່ນ້ຳມິດຊີຊິບປີ, 5:ຊ3
ແມ່ນ້ຳມີເຊີຣີ, 5:ຄ2, 5:ສ4
ແມ່ນ້ຳອາແຄນຊໍ, 6:ງ3
ແມ່ນ້ຳຮັດສັນ, ນິວຢອກ, 1:ຄ3
ແມັກສີໂກ, 6:ຂ3
ມໍເລ, ໄອຊິກ, ບ້ານສວນ, ເຄີດແລນ, 4:ງ1
ເມືອງເຊົາເລັກ, 6:ຂ2
ມອນໂທຣສ໌, ໄອໂອວາ, 5:ສ2
ເມືອງນິວຢອກ, 1:ຄ4, 6:ຊ1
ເມືອງພາໄມຣາ, ນິວຢອກ, 1:ກ3, 2:ງ1, 3:ຊ2
ເມືອງຟາມມິງຕັນ, ເຂດ ພາໄມຣາ, 2:ກ4
ເມືອງມາເກໂດນ, ເຂດ ພາໄມຣາ, 2:ກ1

ຣາມັສ, ອີລີນອຍ, 5:ຊ2
ຣີກດອນ, ຊິດນີ, ບ້ານ, ເຄີດແລນ, 4:ຂ4
ຣີຈ໌ມອນ, ມີເຊີຣີ, 5:ງ4
ໂຣເຈສ໌ເຕີ, ນິວຢອກ, 3:ສ1
ໂຣດໄອແລນ, 1:ງ3
ຣຽວ ກຣານເດ, 6:ຄ4

ລີເບີຕີ, ມີເຊີຣີ, 5:ງ4, 6:ຈ2
ເລບານອນ, ນິວແຮມເຊີ, 1:ງ2
ລອສ໌ ແອນໂຈເລັສ໌, 6:ກ3

ວິດຕິງແຮມ, ເວີໝ້ອນ, 1:ຄ3
ວິດນີ, ນິວເອັນ ເຄ, ບ້ານ, ເຄີດແລນ, 4:ຂ2
ວິດນີ, ນິວເອັນ ເຄ, ຮ້ານຄ້າ, ເຄີດແລນ, 4:ຂ2
ວິນເຕີຄວດເຕີສ໌, ເຂດຂອງຊາວອິນເດຍແດງ, 5:ຂ1, 6:ຈ2
ວໍຊິງຕັນດີຊີ, 6:ຊ2
ເວີໝ້ອນ, 1:ຄ2

ຫ້ວຍສະໂຕນນີ, ເຄີດແລນ, 4:ຄ3
ຫ້ວຍໄຊນ, ມີເຊີຣີ, 5:ງ3
ຫ້ວຍເຣດ, ເຂດ ພາໄມຣາ, 2:ງ2
ຫ້ວຍແຮັດຕະເວ, ເຂດ ພາໄມຣາ, 2:ຂ2, 2:ງ4
ຫ້ອງການພິມ, ເຄີດແລນ, 4:ຂ4

ໝູ່ບ້ານພາໄມຣາ, ນິວຢອກ, 2:ຄ2
ໝູ່ບ້ານແມນເຈດສະເຕີ, ນິວຢອກ, 1:ກ3, 2:ງ3, 3:ຊ2

ອາເຊຣີ, ເຄີດແລນ, 4:ຂ3
ອາດາມ-ອອນໄດ-ອາມັນ, ມີເຊີຣີ, 5:ງ3
ອານຕາຕິກາ, 7:ຈ4
ອາບານີ, ນິວຢອກ, 1:ຄ2
ອາຟຣິກາ, 7:ຈ2
ອາມເຮີດ, ໂອໄຮໂອ, 3:ຄ4
ອາເມຣິກາກາງ, 7:ຂ2
ອາເມຣິກາໃຕ້, 7:ຄ3
ອາເມຣິກາເໜືອ, 7:ຂ2
ອ່າວທະເລສາບ ຟີງເກີ, ນິວຢອກ, 1:ກ3, 3:ຊ2
ອິນດີເພັນເດັນ, ມີເຊີຣີ, 5:ງ4, 6:ຈ2
ອິນດີອານາ, 6:ສ2
ອີລີນອຍ, 5:ຍ3, 6:ສ2
ເອເຊຍ, 7:ສ2
ອົດສະຕາລີ, 7:ຊ3
ໂອໄຮໂອ, 3:ຂ4, 6:ສ2
ອໍເຣັນຈ໌, ໂອໄຮໂອ, 3:ຄ4
ເອີຣົບ, 7:ຈ1
ໄອໂອວາ, 5:ຈ1, 6:ຈ2

ຮາມໂມນີ, ເພັນໂຊເວເນຍ, 1:ຂ3, 3:ຍ3
ແຮຣິສ, ມາຕິນ, ບ້ານສວນ, ເຂດ ພາໄມຣາ, 2:ຂ1
ໂຮງສີກຣິດ, ເຄີດແລນ, 4:ຂ2
ໂຮງສີຮອນ, ມີເຊີຣີ, 5:ງ3
ໂຮງຟອກໜັງ, ເຄີດແລນ, 4:ຂ2
ໂຮງເລື່ອຍ, ເຄີດແລນ, 4:ຂ3
ໂຮງແຮມຈອນສັນ, ເຄີດແລນ, 4:ຂ2
ໂຮງຮຽນ, ເຄີດແລນ, 4:ຂ3
ໄຮຣໍາ, ໂອໄຮໂອ, 3:ງ4

# ຮູບພາບປະຫວັດສາດຂອງສາດສະໜາຈັກ

ຮູບພາບຂອງສະຖານທີ່ແຫ່ງປະຫວັດສາດຂອງສາດສະໜາຈັກທີ່ສຳຄັນເຫລົ່ານີ້ ສະແດງໃຫ້ເຫັນດິນແດນບ່ອນທີ່ໄພ່ພົນຍຸກສຸດທ້າຍເຄີຍເດີນ, ບ່ອນທີ່ສາດສະດາໃນສະໄໝໃໝ່ ເຄີຍອາໄສຢູ່ ແລະ ເຄີຍໄດ້ສອນ, ແລະ ບ່ອນທີ່ເຫດການຫລາຍຢ່າງໄດ້ເກີດຂຶ້ນ.

**ສະຫລຸບ**

ແຜນທີ່ຂ້າງລຸ່ມນີ້ ສະແດງໃຫ້ເຫັນສະຖານທີ່ຂອງຮູບພາບຢູ່ໃນພາກນີ້. ຢູ່ໃນໜ້າຕໍ່ໄປ, ເລກຂອງແຕ່ລະຮູບແມ່ນຕິດຕາມດ້ວຍຄຳອະທິບາຍສັ້ນໆກ່ຽວກັບສະຖານທີ່. ເຫດການທີ່ສຳຄັນໃນພຣະຄຳພີ ຈາກເຂດນັ້ນ ກໍມີລະບຸໄວ້, ພ້ອມດ້ວຍຂໍ້ພຣະຄຳພີອ້າງອີງ ເພື່ອວ່າທ່ານຈະຮູ້ຈັກວ່າ ຈະອ່ານກ່ຽວກັບເຫດການເຫລົ່ານັ້ນໄດ້ຢູ່ໃສ.

1. ປ່າສັກສິດ
2. ພູຄູໂມຣາ ແລະ ເຂດພາໄມຣາ-ແມນເຈດສະເຕີ
3. ເຮືອນໄມ້ທ່ອນຂອງໂຈເຊັບ ສະມິດ ຜູ້ພໍ່
4. ໂຮງພິມ ແລະ ຮ້ານພິມ ແກຣນດິນ
5. ແມ່ນ້ຳຊັສຄູຮັນນາ
6. ສະຖານທີ່ບ້ານຂອງ ພີເຕີ ວິດເມີ ຜູ້ພໍ່
7. ນິວເອັນ ເຄ ວິດນີ ແລະ ຮ້ານຄ້າ
8. ບ້ານຂອງຈອນ ຈອນສັນ
9. ພຣະວິຫານເຄີດແລນ
10. ອາດາມ-ອອນໄດ-ອາມັນ
11. ສະຖານທີ່ພຣະວິຫານຟາແວັດ
12. ຄຸກລີເບີຕີ
13. ປາສາດໃນເມືອງນາວູ
14. ຮ້ານຄ້າດິນຈີ່ສີແດງຂອງໂຈເຊັບ ສະມິດ ຜູ້ລູກ
15. ພຣະວິຫານນາວູ
16. ຄຸກຄາດເທດ
17. ການອົບພະຍົບໄປຫາພາກຕາເວັນຕົກ
18. ພຣະວິຫານເຊົາເລັກ



## 1. ປ່າສັກສິດ



ປ່າ ສັກ ສິດ ຕັ້ງ ຢູ່ ໃນ ເມືອງ ພາໄມຣາ ແລະ ເມືອງ ແມນເຈດສະເຕີ, ລັດນິວຢອກ. ປ່າແຫ່ງນີ້ ຕັ້ງຢູ່ທາງທິດຕາເວັນຕົກຈາກບ່ອນທີ່ເຮືອນໄມ້ທ່ອນຂອງຄອບຄົວສະມິດໄດ້ຕັ້ງຢູ່ ໃນປີ 1820.

*ເຫດການ ທີ່ ສຳ ຄັນ:* ການ ປະກົດ ຂອງພຣະ ເຈົ້າອົງ ເປັນພຣະບິດາ ແລະ ພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, ຕໍ່ສາດສະດາໂຈເຊັບ ສະມິດ ໄດ້ເກີດຂຶ້ນຢູ່ໃນປ່າແຫ່ງນີ້ (ຈສ—ປ 1:14–20).

## 2. ພູຄູໂມຣາ ແລະ ເຂດພາໄມຣາ-ແມນເຈດສະເຕີ



ໂດຍທີ່ເບິ່ງເປັນທາງເໜືອ, ຮູບພາບແຜ່ນນີ້ ສະແດງໃຫ້ພູຄູໂມຣາ ໃນເມືອງແມນເຈດສະເຕີ, ລັດນິວຢອກ. ໃນຮູບພາບນີ້ ຄ້ອຍພູປະກົດຢູ່ແຈທາງລຸ່ມເບື້ອງຂວາມື ແລະ ຢາຍຂຶ້ນໄປທາງເທິງ ຈົນເຖິງເຄິ່ງທາງ. ຫລັກອະນຸສອນສີຂາວທີ່ເຫັນໄດ້ ຕັ້ງຢູ່ທາງເໜືອຂອງຄ້ອຍພູ ເພື່ອເປັນກຽດໃຫ້ແກ່ທູດໂມໂຣໄນ ແລະ ການອອກມາຂອງພຣະຄຳພີມໍມອນ. ພູຄູໂມຣາຕັ້ງຢູ່ປະມານ 5 ກິໂລແມັດ ໃຕ້ຈາກປ່າສັກສິດ. ໃກ້ສົ້ນເທິງຂອງຮູບ ແມ່ນໝູ່ບ້ານພາໄມຣາ, ໄກ 6½ ກິໂລແມັດ. ບ້ານສວນຂອງຄອບຄົວສະມິດ ແລະ ປ່າສັກສິດ ແມ່ນຢູ່ສົ້ນເທິງເບື້ອງຊ້າຍຂອງຮູບພາບ.

*ເຫດການທີ່ສຳຄັນ:* ຄອບຄົວຂອງສາດສະດາໂຈເຊັບ ສະມິດ ໄດ້ອາໄສຢູ່ໃນເຂດນີ້ ໃນໄລຍະທີ່ໄດ້ເຫັນພາບທີ່ມາໃຫ້ເຫັນຄັ້ງທຳອິດ (ຈສ—ປ 1:3). ໃນ ຄ.ສ. 421, ໂມໂຣໄນໄດ້ຝັງແຜ່ນຈາລຶກຄຳໄວ້ໃນພູຄູໂມຣາ ຊຶ່ງບັນຈຸປະຫວັດສາດທີ່ສັກສິດຂອງຜູ້ຄົນຂອງເພິ່ນ (ຄມ 1:1–11; ມມ 6:6; ມຣນ 10:1–2). ໂມໂຣໄນຄືນດຽວກັນນີ້ ໄດ້ບອກໂຈເຊັບ ສະມິດ ບ່ອນທີ່ຈະພົບເຫັນແຜ່ນຈາລຶກ ຢູ່ໃນພູ. ໂມໂຣໄນໄດ້ມອບແຜ່ນຈາລຶກໃຫ້ເພິ່ນ ໃນປີ 1827 (ຄພ 27:5; 128:20; ຈສ—ປ 1:33–35, 51–54, 59).

## 3. ເຮືອນໄມ້ທ່ອນຂອງໂຈເຊັບ ສະມິດ ຜູ້ພໍ່



ຮູບ ຈຳລອງ ຂອງ ເຮືອນ ຂອງ ໂຈເຊັບ ສະມິດ ຜູ້ພໍ່, ຖືກສ້າງຂຶ້ນໃນ ສະຖານທີ່ ແຫ່ງນີ້ ຊຶ່ງດັ້ງເດີມເປັນ ເຮືອນໄມ້ທ່ອນ ໃກ້ເມືອງພາໄມຣາ, ລັດນິວຢອກ. ຄອບຄົວສະມິດໄດ້ສ້າງເຮືອນໄມ້ທ່ອນທີ່ເປັນຊັ້ນເຄິ່ງ ບໍ່ດົນຫລັງຈາກເຂົາເຈົ້າໄດ້ມາເຖິງເມືອງພາໄມຣາ. ຄອບຄົວໄດ້ອາໄສຢູ່ເຮືອນນີ້ ຈາກປີ 1819 ເຖິງປີ 1825.

*ເຫດການທີ່ສຳຄັນ:* ສາດສະດາໂຈເຊັບ ສະມິດ ໄດ້ສຶກສາພຣະຄຳພີຢູ່ໃນເຮືອນຫລັງນີ້ ໃນໄລຍະທີ່ເພິ່ນມີຄວາມສັບສົນ ແລະ ຢາກຮູ້ວ່າ ສາດສະໜາຈັກແຫ່ງໃດແທ້ຈິງ (ຈສ—ປ 1:11–13). ໂມໂຣໄນໄດ້ມາປະກົດຕໍ່ໂຈເຊັບ ແລະ ໄດ້ບອກເພິ່ນກ່ຽວກັບແຜ່ນຈາລຶກພຣະຄຳພີມໍມອນ (ຈສ—ປ 1:30–47).

## 4. ໂຮງພິມ ແລະ ຮ້ານພິມ ແກຣນດິນ



ຮ້ານພິມທີ່ຖືກສ້ອມແປງຄືນໃໝ່ຂອງ ເອກເບີດ ບີ ແກຣນດິນ ໃນເມືອງພາໄມຣາ, ລັດນິວຢອກ, ບ່ອນທີ່ພຣະຄຳພີມໍມອນຊຸດທຳອິດໄດ້ຖືກຈັດພິມ ໃນປີ 1830. ມາຕິນ ແຮຣິສ ໄດ້ເອົາບ້ານສວນຂອງເພິ່ນໄປມັດຈຳ ແລະ ໄດ້ຂາຍພາກສ່ວນໜຶ່ງຂອງທີ່ດິນ ເພື່ອຈ່າຍຄ່າພິມພຣະຄຳພີມໍມອນ 5,000 ເຫລັ້ມ. ການລຽນຕົວພິມໄດ້ເລີ່ມຕົ້ນ ໃນເດືອນສິງຫາ ປີ 1829, ແລະ ໄດ້ພຣະຄຳພີທີ່ຈັດພິມສຳເລັດ ມີຈຳໜ່າຍ ໃນວັນທີ 26 ເດືອນມີນາ, 1830.

*ເຫດການທີ່ສຳຄັນ:* ມາຕິນ ແຮຣິສ ໄດ້ຖືກບັນຊາໃຫ້ສະລະຊັບສິນຂອງເພິ່ນບາງຈຳນວນ ດ້ວຍຄວາມສະໝັກໃຈ ເພື່ອຈ່າຍຄ່າການພິມພຣະຄຳພີມໍມອນ (ຄພ 19:26–35).

**5. ແມ່ນ້ຳຊັສຄູຮັນນາ**



ຮູບພາບນີ້ສະແດງໃຫ້ເຫັນແມ່ນ້ຳຊັສຄູຮັນນາ ໃນເມືອງຮາມໂມນີ, ລັດເພັນໂຊເວເນຍ.

*ເຫດການທີ່ສຳຄັນ:* ໂຈເຊັບ ສະມິດ ຜູ້ລູກ ໄດ້ມາເມືອງຮາມໂມນີ ເປັນເທື່ອທຳອິດ ໃນປີ 1825 ເພື່ອຊອກຫາວຽກທຳ. ເພິ່ນກັບພໍ່ຂອງເພິ່ນ ໄດ້ອາໄສຢູ່ໃກ້ແມ່ນ້ຳນີ້ ຢູ່ເຮືອນຂອງໄອຊິກ ເຮວ, ບ່ອນທີ່ໂຈເຊັບ ໄດ້ພົບກັບນາງເອມມາ ເຮວ, ພັນລະຍາໃນອະນາຄົດຂອງເພິ່ນ, ເປັນເທື່ອທຳອິດ (ຈສ—ປ 1:56–57). ໂຈເຊັບ ແລະ ເອມມາ ໄດ້ແຕ່ງງານກັນໃນວັນທີ 18 ເດືອນມັງກອນ, 1827. ສາດສະດາໄດ້ຮັບແຜ່ນຈາລຶກຄຳ ໃນວັນທີ 22 ເດືອນກັນຍາ, 1827, ທີ່ເມືອງແມນເຈດສະເຕີ, ລັດນິວຢອກ, ແລະບໍ່ດົນຫລັງຈາກນັ້ນ ໄດ້ຍ້າຍໄປກັບນາງເອມມາ ໄປຢູ່ເມືອງຮາມໂມນີ, ບ່ອນທີ່ເພິ່ນໄດ້ເລີ່ມຕົ້ນແປແຜ່ນຈາລຶກ. ໃນລະຫວ່າງການແປພຣະຄຳພີມໍມອນ, ໂຈເຊັບ ແລະ ອໍລີເວີ ຢາກຮູ້ຕື່ມອີກກ່ຽວກັບການບັບຕິສະມາ ແລະ ໄດ້ຍ່າງໄປຫາບ່ອນໜຶ່ງຢູ່ໃນປ່າໃກ້ແມ່ນ້ຳນີ້ ເພື່ອອະທິຖານຫາພຣະຜູ້ເປັນເຈົ້າ ກ່ຽວກັບເລື່ອງນີ້. ໃນການຕອບຕໍ່ຄຳອະທິຖານນີ້, ໂຢຮັນບັບຕິສະໂຕ ໄດ້ມາປະກົດຕົວ ໃນວັນທີ 15 ເດືອນພຶດສະພາ, 1829 (ຈສ—ປ 1:66–74; ຄພ 13). ເພິ່ນໄດ້ມອບຖານະປະໂລຫິດແຫ່ງອາໂຣນໃຫ້ແກ່ໂຈເຊັບ ແລະ ອໍລີເວີ. ແລ້ວ ພວກເພິ່ນໄດ້ລົງໄປໃນແມ່ນ້ຳ ແລະ ໄດ້ໃຫ້ບັບຕິສະມາແກ່ກັນ ເພື່ອການປົດບາບ. ແລ້ວໂດຍທີ່ໄດ້ຮັບການຊີ້ນຳຈາກໂຢຮັນບັບຕິສະໂຕ, ໂຈເຊັບ ແລະ ອໍລີເວີ ໄດ້ແຕ່ງຕັ້ງກັນ ແລະກັນສູ່ຕຳແໜ່ງຖານະປະໂລຫິດແຫ່ງອາໂຣນ. ບໍ່ດົນຫລັງຈາກນັ້ນ, ເປໂຕ, ຢາໂກໂບ, ແລະ ໂຢຮັນ ໄດ້ມາປະກົດ ລະຫວ່າງເມືອງຮາມໂມນີ ແລະ ເມືອງໂຄນສະວຽວ ແລະ ໄດ້ມອບຖານະປະໂລຫິດແຫ່ງເມນຄີເສເດັກ ໃຫ້ແກ່ໂຈເຊັບ ແລະ ອໍລີເວີ (ຄພ 27:12–13; 128:20).

## 6. ສະຖານທີ່ບ້ານຂອງ ພີເຕີ ວິດເມີ ຜູ້ພໍ່



ເຮືອນໄມ້ທ່ອນຫລັງນີ້ ເປັນຕົວແທນໃຫ້ແກ່ເຮືອນດັ້ງເດີມຂອງ ພີເຕີ ວິດເມີ ຜູ້ພໍ່ ໃນເມືອງເຟແອດ, ລັດນິວຢອກ.

*ເຫດການທີ່ສຳຄັນ:* ໂຈເຊັບ ສະມິດ ໄດ້ສຳເລັດການແປພຣະຄຳພີມໍມອນ ຢູ່ບ່ອນນີ້ ໃນທ້າຍເດືອນມິຖຸນາ ປີ 1829. ຢູ່ໃນປ່າໃກ້ເຮືອນຫລັງນີ້, ພະຍານສາມຄົນໄດ້ເຫັນທູດໂມໂຣໄນ ແລະ ແຜ່ນຈາລຶກຄຳ. ປະຈັກພະຍານຂອງພວກເພິ່ນ ມີຢູ່ໃນພຣະຄຳພີມໍມອນທຸກເຫລັ້ມ. ໃນວັນທີ 6 ເດືອນເມສາ, 1830, ຜູ້ຄົນປະມານ 60 ຄົນ ໄດ້ມາຮ່ວມຊຸມນຸມກັນ ຢູ່ໃນເຮືອນຂອງ ພີເຕີ ວິດເມີ ເພື່ອເປັນພະຍານຕໍ່ການຈັດຕັ້ງ ສາດສະໜາຈັກຂອງພຣະເຢຊູຄຣິດຂຶ້ນເປັນທາງການ (ຄພ 20). ການປະຊຸມ ແລະ ກອງປະຊຸມເທື່ອທຳອິດຂອງສາດສະໜາຈັກໃໝ່ ໄດ້ຖືກຈັດຂຶ້ນຢູ່ໃນເຮືອນຫລັງນີ້. ການເປີດເຜີຍຊາວຢ່າງ ທີ່ບັນຈຸຢູ່ໃນພຣະຄຳພີຄຳສອນ ແລະ ພັນທະສັນຍາ ແມ່ນໄດ້ຮັບຢູ່ໃນບ້ານຂອງ ພີເຕີ ວິດເມີ.

## 7. ນິວເອັນ ເຄ ວິດນີ ແລະ ຮ້ານຄ້າ




ຮ້ານຄ້າຂອງນິວເອັນ ເຄ ວິດນີ ມີບົດບາດທີ່ສຳຄັນ ໃນປະຫວັດສາດຂອງສາດສະໜາຈັກ ໃນເມືອງ ເຄີດແລນ. ໂຈເຊັບ ແລະ ເອມມາ ສະມິດ ໄດ້ອາໄສ ຢູ່ບ່ອນນີ້ ຊົ່ວໄລຍະໜຶ່ງ. ໄດ້ຮັບການເປີດເຜີຍທີ່ສຳ ຄັນຫລາຍຢ່າງຢູ່ບ່ອນນີ້. ໂຮງຮຽນຂອງສາດສະດາ ໄດ້ຖືກຈັດຕັ້ງຂຶ້ນ ຢູ່ໃນຮ້ານຄ້າ ຈາກວັນທີ 24 ເດືອນ ມັງກອນ, 1833, ຈົນເຖິງ ປະມານເດືອນເມສາ ປີ 1833.

*ເຫດການທີ່ສຳຄັນ:* ສາດສະດາໂຈເຊັບ ສະມິດ ໄດ້ ຮັບການເປີດເຜີຍກ່ຽວກັບ ພຣະວາຈາແຫ່ງປັນຍາ (ຄພ 89). ເພິ່ນໄດ້ທຳການແປພຣະຄຣິສຕະທຳຄຳພີ ຂອງໂຈເຊັບ ສະມິດ (ປຈສ) ສ່ວນຫລາຍ ຢູ່ບ່ອນນີ້.

## 8. ບ້ານຂອງຈອນ ຈອນສັນ



ບ້ານຂອງຈອນ ແລະ ອາລິສ໌ ຈອນສັນ ໄດ້ຕັ້ງຢູ່ໃນເມືອງໄຮຣຳ, ລັດໂອໄຮໂອ. ຫ້ອງນີ້ແມ່ນຢູ່ຊັ້ນທີສອງ.

*ເຫດການທີ່ສຳຄັນ:* ສາດສະດາໂຈເຊັບ ສະມິດ ແລະ ເອມມາ ພັນລະຍາຂອງເພິ່ນ ໄດ້ອາໄສຢູ່ໃນບ້ານນີ້. ໂຢເຊັບ ແລະ ຊິດນີ ຣິກດອນ ໄດ້ຮັບພາບທີ່ມາໃຫ້ເຫັນທີ່ໜ້າອັດສະຈັນໃຈ ກ່ຽວກັບລະດັບຂອງລັດສະໝີພາບ ຢູ່ຕໍ່ໜ້າຫລາຍຄົນ ໃນວັນທີ 6 ເດືອນກຸມພາ, 1832 (ຄພ 76). ສາດສະດາໂຈເຊັບ ກໍໄດ້ທຳການແປພຣະຄຣິສຕະທຳຄຳພີຂອງ ໂຈເຊັບ ສະມິດ (ປຈສ) ຢູ່ໃນບ້ານນີ້ເໝືອນກັນ. ໃນຄ່ຳຄືນຂອງວັນທີ 24 ເດືອນມີນາ, 1832, ໃນຂະນະທີ່ໂຈເຊັບ ແລະ ເອມມາ ອາໄສຢູ່ບ່ອນນີ້, ກຸ່ມອັນຕະພານຜູ້ປະຖິ້ມຄວາມເຊື່ອ ແລະ ຜູ້ຕໍ່ຕ້ານຊາວມໍມອນ ໄດ້ຂູ່ນຕີ, ເອົາຢາງໝາກຕອຍທາຕົນຕົວຂອງໂຈເຊັບ ແລະ ຊິດນີ ແລ້ວໄດ້ເອົາຂົນໄກ່ພຶກໃສ່ພວກເພິ່ນນຳອີກ.

## 9. ພຣະວິຫານເຄີດແລນ



ພຣະວິຫານເຄີດແລນ ແມ່ນຕັ້ງຢູ່ໃນເມືອງເຄີດແລນ, ລັດໂອໄຮໂອ.

*ເຫດການທີ່ສຳຄັນ:* ພຣະວິຫານເຄີດແລນ ເປັນພຣະວິຫານແຫ່ງທຳອິດ ໃນຍຸກສະໄໝນີ້ (ຄພ 88:119; 95). ໃນພຣະວິຫານແຫ່ງນີ້, ໂຈເຊັບ ສະມິດ ໄດ້ເຫັນພາບນິມິດກ່ຽວກັບອານາຈັກຊັ້ນສູງ (ຄພ 137). ມັນໄດ້ຖືກອຸທິດ ໃນວັນທີ 27 ເດືອນມີນາ, 1836 (ຄພ 109). ໃນວັນທີ 3 ເດືອນເມສາ, 1836, ພຣະຜູ້ຊ່ວຍໃຫ້ລອດໄດ້ມາປະກົດຕົວ ແລະ ໄດ້ຮັບເອົາພຣະວິຫານເປັນສະຖານທີ່ ທີ່ພຣະອົງຈະເປີດເຜີຍພຣະຄຳຂອງພຣະອົງ ແກ່ຜູ້ຄົນຂອງພຣະອົງ (ຄພ 110:1–10). ຫລັງຈາກການປະກົດຕົວນີ້, ໂມເຊ, ອີລາຍ, ແລະ ເອລີຢາ ໄດ້ມາຢ້ຽມຢາມໂຈເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ, ຊຶ່ງເພິ່ນທຸກຄົນກໍໄດ້ມອບຂໍກະແຈໃດໜຶ່ງໂດຍສະເພາະ ແລະ ຂໍ້ມູນທີ່ສຳຄັນໃຫ້ (ຄພ 110:11–16). ພຣະວິຫານແຫ່ງນີ້ ໄດ້ຮັບໃຊ້ໄພ່ພົນຂອງພຣະເຈົ້າເປັນເວລາສອງປີ ກ່ອນເຂົາເຈົ້າໄດ້ໜີໄປຈາກເມືອງເຄີດແລນ ເນື່ອງດ້ວຍການຂົ່ມເຫັງ.

## 10. ອາດາມ-ອອນໄດ-ອາມັນ



ໂດຍ ທີ່ ເບິ່ງ ໄປ ທາງ ໃຕ້ ຈະ ເຫັນ ຮ່ອມ ພູ ອາດາມ-ອອນໄດ-ອາມັນ, ຊຶ່ງງຽບ ສະຫງົບ, ແລະ ສວຍ ງາມ ໃນພາກຕາເວັນຕົກສຽງເໜືອຂອງລັດມີເຊີຣີ ໃກ້ຊຸມຊົນກາລາຕິນ.

*ເຫດການ ທີ່ສຳຄັນ:* ສາມປີກ່ອນອາດາມໄດ້ເສຍຊີວິດໄປ, ເພິ່ນໄດ້ເອີ້ນລູກຫລານທີ່ຊອບທຳຂອງເພິ່ນມາຫາຫ່ອມພູນີ້ ແລະ ໄດ້ມອບພອນເທື່ອສຸດທ້າຍຂອງເພິ່ນໃຫ້ເຂົາເຈົ້າ (ຄພ 107:53–56). ໃນປີ 1838 ອາດາມ-ອອນໄດ-ອາມັນ ໄດ້ເປັນສະຖານທີ່ຕັ້ງຖິ່ນຖານຂອງໄພ່ພົນຍຸກສຸດທ້າຍ ປະມານ 500 ເຖິງ 1,000 ຄົນ. ໄພ່ພົນຍຸກສຸດທ້າຍໄດ້ປະເຮືອນຊານບ້ານຊ່ອງໄປ ເມື່ອເຂົາເຈົ້າຖືກຂັບໄລ່ອອກຈາກລັດມີເຊີຣີ. ກ່ອນການສະເດັດມາຄັ້ງທີສອງຂອງພຣະຄຣິດໃນຄວາມຮຸ່ງເຫລື້ອມຂອງພຣະອົງ, ອາດາມ ແລະ ລູກຫລານທີ່ຊອບທຳຂອງເພິ່ນ, ຊຶ່ງຮ່ວມດ້ວຍໄພ່ພົນຂອງພຣະເຈົ້າ ໃນທຸກຍຸກທຸກສະໄໝ, ຈະມາເຕົ້າໂຮມກັນອີກ ໃນຮ່ອມພູແຫ່ງນີ້ ເພື່ອພົບກັບພຣະຜູ້ຊ່ວຍໃຫ້ລອດ (ດນອ 7:9–10, 13–14; ຄພ 27; 107:53–57; 116).

## 11. ສະຖານທີ່ພຣະວິຫານຟາແວັດ



ການຕັ້ງຖິ່ນຖານໃນເມືອງຟາແວັດ, ລັດມີເຊີຣີ, ໄດ້ກາຍເປັນບ້ານເຮືອນຂອງໄພ່ພົນຂອງພຣະເຈົ້າ ຈຳນວນ 3,000 ເຖິງ 5,000 ຄົນ ຜູ້ໄດ້ຊອກຫາບ່ອນຫລົບໄພ ຈາກການຂົ່ມເຫັງ ໃນເຂດແຈ໊ກສັນ ແລະ ໃນເຂດຄະເລ. ໃນປີ 1838 ພຣະຜູ້ເປັນເຈົ້າ ໄດ້ບັນຊາໄພ່ພົນຂອງພຣະເຈົ້າໃຫ້ສ້າງພຣະວິຫານໜຶ່ງຂຶ້ນຢູ່ບ່ອນນີ້ (ເບິ່ງ ຄພ 115:7–8). ການຂົ່ມເຫັງຂອງກຸ່ມອັນຕະພານ ໄດ້ກີດກັນເຂົາເຈົ້າຈາກການສ້າງ. ໃນວັນທີ 31 ເດືອນຕຸລາຂອງປີນັ້ນ, ສາດສະດາໂຈເຊັບ ສະມິດ ແລະ ຜູ້ນຳຄົນອື່ນໆຂອງສາດສະໜາຈັກໄດ້ຖືກຈັບ, ແລະ ຫລັງຈາກໄດ້ໄປຂຶ້ນສານຢູ່ເມືອງຣິຈ໌ມອນ, ພວກເພິ່ນໄດ້ຖືກສົ່ງໄປເຂົ້າຄຸກລິເບີຕີ. ໃນລະຫວ່າງລະດູໜາວຂອງປີ 1838–1839, ໄພ່ພົນຍຸກສຸດທ້າຍ ໄດ້ຖືກຂັບໄລ່ອອກຈາກເມືອງຟາແວັດ ແລະ ຈາກສະຖານທີ່ແຫ່ງອື່ນໆ ໃນລັດມີເຊີຣີ ແລະ ໄດ້ໄປອາໄສຢູ່ລັດອິລິນອຍ.

*ເຫດການທີ່ສຳຄັນ:* ສະຖານທີ່ສຳລັບພຣະວິຫານໄດ້ຖືກອຸທິດ ແລະ ຫີນເສົາເອກໄດ້ຖືກປັກລົງ. ໄດ້ຮັບການເປີດເຜີຍເຈັດຢ່າງ ທີ່ຖືກຈັດພິມໃນພຣະຄຳພີຄຳສອນ ແລະ ພັນທະສັນຍາ ທີ່ມີຢູ່ໃນ (ພາກ 113–115; 117–120). ໂຈເຊັບ ແອັຟ ສະມິດ, ປະທານຄົນທີຫົກຂອງສາດສະໜາຈັກ, ໄດ້ເກີດເມື່ອວັນທີ 3 ເດືອນພະຈິກ, 1838, ໃນເມືອງຟາແວັດ. ເມືອງຟາແວັດໄດ້ຮັບໃຊ້ເປັນສູນກາງໃຫຍ່ຂອງສາດສະໜາຈັກ ຊົ່ວໄລຍະໜຶ່ງ ພາຍໃຕ້ການຊີ້ນຳຂອງສາດສະດາໂຈເຊັບ ສະມິດ.

## 12. ຄຸກລິເບີຕີ



ຄຸກ ໃນ ເມືອງ ລິ ເບີ ຕີ, ລັດ ມິ ເຊີຣີ, ປະ ມານ 1878. ໂຈເຊັບ ສະມິດ ແລະ ອ້າຍນ້ອງ ຫ້າຄົນ ໄດ້ຖືກຄຸມຂັງ ຢ່າງບໍ່ຍຸດຕິທຳ ໃນຄຸກທີ່ຝາຕຶບໜາເຖິງ 1.2 ແມັດ ຈາກວັນທີ 1 ເດືອນທັນວາ, 1838, ຈົນເຖິງ ວັນທີ 6 ເດືອນເມສາ, 1839. (ຊິດນີ ຣິກດອນ ໄດ້ຖືກປ່ອຍຕົວໃນທ້າຍເດືອນກຸມພາ.) ໂດຍທີ່ຖືກຄຸມຂັງຢູ່ໃນຫ້ອງຊັ້ນລຸ່ມ ຫລື ຫ້ອງໃຕ້ດິນຂອງຕຶກຄຸກ, ພວກເພິ່ນໄດ້ນອນຢູ່ພື້ນຫ້ອງເປັນຫີນທີ່ໜາວເຢັນ, ປູດ້ວຍເຟືອງ, ມີຄວາມສະຫວ່າງພໍມົວໆ ແລະ ຂາດແຄນສິ່ງປົກປ້ອງຈາກລະດູໜາວ.

*ເຫດການທີ່ສຳຄັນ:* ສາດສະດາໂຈເຊັບ, ໄດ້ອ້ອນວອນເພື່ອໄພ່ພົນຍຸກສຸດທ້າຍ ຜູ້ທີ່ໄດ້ຖືກຂັບໄລ່ອອກຈາກລັດມິເຊີຣີ, ໄດ້ຮັບຄຳຕອບ ຈາກຄຳອະທິຖານຂອງເພິ່ນ, ຊຶ່ງເພິ່ນໄດ້ຂຽນໄວ້ໃນຈົດໝາຍ ເຖິງໄພ່ພົນຂອງພຣະເຈົ້າທີ່ຖືກເນລະເທດ (ຄພ 121–123).

## 13. ປາສາດໃນເມືອງນາວູ



ໂຈເຊັບ ສະມິດ ຜູ້ລູກ ແລະ ຄອບຄົວຂອງເພິ່ນ ໄດ້ຍ້າຍ ເຂົ້າ ໄປ ຢູ່ ປາສາດ ໃນ ເມືອງ ນ າວູ ໃນ ເ ດືອນ ສິງຫາ ປີ 1843. ຕໍ່ມາ ໄດ້ຕໍ່ເຮືອນອອກອີກຢູ່ທາງເບື້ອງຕາເວັນອອກ ລວມແລ້ວມີຢູ່ດ້ວຍກັນ 22 ຫ້ອງ. ນັບຕັ້ງແຕ່ ເດືອນມັງກອນ ປີ 1844, ເອເບ ເນເຊີ ຣໍບິນສັນ ໄດ້ປ່ຽນປາສາດຫລັງນີ້ ໃຫ້ເປັນໂຮງແຮມ, ແລະ ສາດສະດາໄດ້ເກັບຫົກຫ້ອງໄວ້ສຳລັບຄອບຄົວຂອງເພິ່ນ. ປາສາດຫລັງນີ້ໄດ້ຖືກໃຊ້ເປັນສູນກາງສັງສັນຂອງຊຸມຊົນໃນເມືອງນາວູ. ສາດສະດາໄດ້ຮັບຕ້ອນແຂກຜູ້ສຳຄັນໃນປາສາດຫລັງນີ້.

*ເຫດການທີ່ສຳຄັນ:* ໃນວັນທີ 27 ເດືອນມິຖຸນາ, 1844, ສາດສະດາໂຈເຊັບ ແລະ ໄຮຣຳ ອ້າຍຂອງເພິ່ນ ໄດ້ຖືກຍິງ ແລະ ຖືກຂ້າ ໃນເມືອງຄາດເທດ, ລັດອິລິນອຍ, ແລະ ສົບຂອງພວກເພິ່ນ ໄດ້ຖືກນຳມາທີ່ປາສາດນີ້ ເພື່ອການໄວ້ອາໄລ ກ່ອນງານສົ່ງສະການ. ພວກເພິ່ນໄດ້ຖືກຝັງໄວ້ຢູ່ໃນປ່າຊ້າຂອງຄອບຄົວກົງກັນຂ້າມກັບຖະໜົນເມນ, ເບື້ອງຕາເວັນຕົກຂອງເຮືອນໄມ້ທ່ອນ ທີ່ໂຢເຊັບເຄີຍອາໄສຢູ່ ຕອນເພິ່ນຍ້າຍມາຢູ່ເມືອງນາວູໃໝ່. ເອມມາ ສະມິດ ໄດ້ອາໄສຢູ່ໃນປາສາດ ຈົນເຖິງປີ 1871. ແລ້ວນາງໄດ້ຍ້າຍໄປຢູ່ເຮືອນນາວູ, ບ່ອນທີ່ນາງໄດ້ເສຍຊີວິດ ໃນປີ 1879.

## 14. ຮ້ານຄ້າດິນຈີ່ສີແດງຂອງໂຈເຊັບ ສະມິດ ຜູ້ລູກ



ຮ້ານຄ້າ ແລະ ຫ້ອງການຂອງໂຈເຊັບ ສະມິດ ຜູ້ລູກ ທີ່ໄດ້ຖືກສ້ອມແປງຄືນໃໝ່ນີ້ ຕັ້ງຢູ່ໃນເມືອງນາວູ, ລັດ ອີລິນອຍ. ມັນໄດ້ເປັນອາຄານຫລັງທີ່ສຳຄັນໃນສາດສະໜາຈັກ ໃນສະໄໝເມືອງນາວູ. ບໍ່ພຽງແຕ່ຖືກໃຊ້ ເປັນຮ້ານຄ້າທົ່ວໄປ, ມັນຍັງກາຍເປັນສະຖານທີ່ສັງສັນ, ສະຖານທີ່ເຮັດກິດຈະກຳທາງເສດຖະກິດ, ທາງການເມືອງ, ແລະ ທາງສາດສະໜາ ນຳອີກ. ໂຈເຊັບ ສະມິດ ໄດ້ໃຊ້ຫ້ອງຊັ້ນເທິງເປັນຫ້ອງການ.

*ເຫດການທີ່ສຳຄັນ:* ກ່ອນພຣະວິຫານສ້າງສຳເລັດ, ຫ້ອງຊັ້ນເທິງຂອງຮ້ານຄ້າ ໄດ້ຖືກໃຊ້ເປັນຫ້ອງກະທຳພິທີການ, ບ່ອນທີ່ຂອງປະທານສັກສິດຄົບຊຸດໄດ້ຖືກມອບໃຫ້ເປັນເທື່ອທຳອິດ. ໃນວັນທີ 17 ເດືອນມີນາ, 1842, ສາດສະດາໂຈເຊັບ ໄດ້ຈັດຕັ້ງກຸ່ມສະຕີຂອງສາດສະໜາຈັກ ໃຫ້ເປັນສະມາຄົມສະຕີສົງເຄາະ.

## 15. ພຣະວິຫານນາວູ



ພຣະວິຫານນາວູດັ້ງເດີມ ໄດ້ຖືກສ້າງດ້ວຍຫີນປູນ ສີຂີ້ເຖົ່າປົນຂາວ ທີ່ມີຢູ່ໃນທ້ອງຖິ່ນ. ມັນມີຄວາມຍາວ 39 ແມັດ ແລະ ຄວາມກວ້າງ 27 ແມັດ. ຈອມຂອງພຣະວິຫານສູງ 48 ແມັດ ຈາກພື້ນ. ສະມາຊິກຂອງສາດສະໜາຈັກ ໄດ້ເສຍສະລະຢ່າງຫລວງຫລາຍໃນການສ້າງພຣະວິຫານທີ່ສວຍງາມແຫ່ງນີ້, ເລີ່ມຕົ້ນການສ້າງໃນປີ 1841. ບາງຄົນໄດ້ທຳງານເປັນເວລາຫລາຍເດືອນໃນການສ້າງ; ບາງຄົນໄດ້ສະລະເງິນຄຳ. ເຖິງແມ່ນວ່າມັນບໍ່ໄດ້ສຳເລັດຄົບຖ້ວນ, ແຕ່ພຣະວິຫານຍັງເຕັມໄປດ້ວຍສະມາຊິກ ຜູ້ມາເຮັດພິທີການ ໃນໄລຍະສອງສາມເດືອນ ກ່ອນເຂົາເຈົ້າໜີໄປຫາພາກຕາເວັນຕົກ. ໃນຂະນະທີ່ໄພ່ພົນຂອງພຣະເຈົ້າ ບາງຈຳນວນໄດ້ຈາກເມືອງນາວູໄປ ໃນຕົ້ນລະດູໃບໄມ້ປົ່ງຂອງປີ 1846 ເນື່ອງດ້ວຍການຂູ່ເຂັນຂອງກຸ່ມອັນຕະພານ, ແຕ່ຜູ້ຄົນພິເສດກຸ່ມໜຶ່ງໄດ້ຢູ່ຕໍ່ ເພື່ອສ້າງພຣະວິຫານໃຫ້ສຳເລັດ. ໃນວັນທີ 30 ເດືອນເມສາ, 1846, ແອວເດີ ອໍສັນ ຣາຍດ໌ ແລະແອວເດີ ວິວເຝີດ ວູດຣັບ ແຫ່ງກຸ່ມອັກຄະສາວົກສິບສອງ ແລະ ຄົນອື່ນໆ ປະມານ 20 ຄົນ ໄດ້ອຸທິດບ້ານຂອງພຣະຜູ້ເປັນເຈົ້າແຫ່ງນີ້. ພຣະວິຫານໄດ້ຖືກປະຖິ້ມ ໃນເດືອນກັນຍາ ເມື່ອສະມາຊິກກຸ່ມສຸດທ້າຍໄດ້ຖືກຂັບໄລ່ອອກຈາກເມືອງນາວູ; ກຸ່ມອັນຕະພານໄດ້ບັງຄັບຜູ້ຄົນໃຫ້ໜີໄປ ແລະ ໄດ້ທຳລາຍພຣະວິຫານທີ່ສັກສິດ. ຂ້າງໃນໄດ້ຖືກທຳລາຍດ້ວຍໄຟ ໃນເດືອນຕຸລາ ປີ 1848. ພຣະວິຫານໄດ້ຖືກສ້າງຄືນໃໝ່ (ຮູບນີ້), ສ້າງຄືນໃຫ້ເໝືອນດັ້ງເດີມ, ໄດ້ຖືກອຸທິດຄືນໃໝ່ໂດຍປະທານກໍດອນ ບີ ຮິງລີ ໃນວັນທີ 27–30 ເດືອນມິຖຸນາ, 2002.

*ເຫດການທີ່ສຳຄັນ:* ກອງປະຊຸມໃຫຍ່ສາມັນ ໄດ້ຖືກຈັດຂຶ້ນໃນຫ້ອງຊຸມນຸມ ຂອງພຣະວິຫານ ໃນວັນທີ 5 ເດືອນຕຸລາ, 1845. ພິທີການສັກສິດໄດ້ເລີ່ມຕົ້ນໃນວັນທີ 10 ເດືອນທັນວາ, 1845, ແລະ ໄດ້ສືບຕໍ່ໄປເຖິງວັນທີ 7 ເດືອນກຸມພາ, 1846. ໄພ່ພົນຍຸກສຸດທ້າຍຫລາຍກວ່າ 5,500 ຄົນ ໄດ້ຮັບຂອງປະທານສັກສິດຂອງເຂົາເຈົ້າ, ແລະ ຫລາຍຄົນໄດ້ຮັບບັບຕິສະມາ ແລະ ໄດ້ຮັບພິທີການຜະນຶກແທນຄົນຕາຍ.

**16. ຄຸກຄາດເທດ**



ຄຸກໃນເມືອງຄາດເທດ, ລັດອິລິນອຍ.

*ເຫດການ ທີ່ສຳຄັນ:* ໂຈເຊັບ ສະມິດ ແລະ ໄຮຣຳ ອ້າຍຂອງເພິ່ນ ໄດ້ຂີ່ມ້າໄປຫາຄຸກ ເມື່ອວັນທີ 24 ເດືອນມິຖຸນາ, 1844. ພວກເພິ່ນໄດ້ຖືກເອົາເຂົ້າຄຸກ ໃນວັນທີ 25 ເດືອນມິຖຸນາ ໂດຍການຟ້ອງຮ້ອງທີ່ບໍ່ມີມູນຄວາມຈິງ. ໃນວັນທີ 27 ເດືອນມິຖຸນາ, ກຸ່ມອັນຕະພານທີ່ທາໜ້າຕາດຳ ໄດ້ບຸກລຸກເຂົ້າມາໃນຄຸກ. ທັງໂຈເຊັບ ແລະ ໄຮຣຳ ໄດ້ຖືກຍິງຕາຍ, ແລະ ຈອນ ເທເລີ ໄດ້ຮັບບາດເຈັບ ຈາກການຖືກຍິງຫລາຍເທື່ອ. ໜ້າອັດສະຈັນໃຈທີ່ ວິວເລີດ ຣິເຈີສ໌ ບໍ່ໄດ້ຮັບບາດເຈັບເລີຍ.

## 17. ການອົບພະຍົບໄປຫາພາກຕາເວັນຕົກ



ການເລີ່ມຕົ້ນໜີຈາກເມືອງນາວູ, ລັດອິລິນອຍ, ໄດ້ຖືກວາງແຜນໄວ້ວ່າ ເປັນເດືອນມີນາ–ເມສາ, ແຕ່ເພາະການຂົ່ມຂູ່ຂອງກຸ່ມອັນຕະພານ ປະທານບຣິກຳ ຢັງ ຈຶ່ງໄດ້ແນະນຳວ່າ ໃຫ້ໄພ່ພົນຂອງພຣະເຈົ້າ ອົບພະຍົບອອກເດີນທາງຂ້າມແມ່ນ້ຳມິດຊີຊິບປີ ໄປເລີ່ມຕົ້ນໃນວັນທີ 2 ເດືອນກຸມພາ, 1846. ປະທານ ຢັງ ໄດ້ຢູ່ຕໍ່ ເພື່ອມອບຂອງປະທານສັກສິດໃຫ້ແກ່ໄພ່ພົນຂອງພຣະເຈົ້າ ແລະ ບໍ່ໄດ້ໜີຈາກເມືອງນາວູ ຈົນກວ່າເຖິງກາງເດືອນກຸມພາ.

*ເຫດການທີ່ສຳຄັນ:* ກ່ອນເພິ່ນໄດ້ເສຍຊີວິດໄປ, ສາດສະດາ ໂຈເຊັບ ສະມິດ ໄດ້ທຳນາຍວ່າ, "ບາງຄົນໃນພວກທ່ານຈະມີຊີວິດຢູ່ຕໍ່ ເພື່ອໄປຮັບໃຊ້ຕັ້ງຖິ່ນຖານ ແລະ ສ້າງເມືອງ ແລະ ເຫັນໄພ່ພົນຂອງພຣະເຈົ້າ ກາຍເປັນຜູ້ຄົນທີ່ຍິ່ງໃຫຍ່ ໃນທ່າມກາງພູເຂົາຣັອກກີ້." ໄພ່ພົນຂອງພຣະເຈົ້າເກືອບເຖິງ 12,000 ຄົນ ໄດ້ໜີຈາກເມືອງນາວູ ເລີ່ມຈາກເດືອນກຸມພາ ເຖິງ ເດືອນກັນຍາ ປີ 1846. ຫລັງຈາກໄພ່ພົນຂອງພຣະເຈົ້າໄດ້ໜີຈາກເມືອງວິນເຕີຄວດເຕີສ໌ ແລະ ສະຖານທີ່ອື່ນໆຕໍ່ຈາກນັ້ນ, ເຂົາເຈົ້າໄດ້ຖືກຈັດເຂົ້າເປັນກຸ່ມໆ, ຈຳນວນສິບຄົນ, ຫ້າສິບຄົນ, ແລະ ໜຶ່ງຮ້ອຍຄົນ, ພາຍໃຕ້ການຄວບຄຸມຂອງຫົວໜ້າກຸ່ມ (ຄພ 136:3). ໃນເດືອນກັນຍາ ປີ 1846 ກຸ່ມອັນຕະພານ ປະມານ 800 ຄົນ ພ້ອມດ້ວຍປືນໃຫຍ່ຫົກລຳ ໄດ້ມາລ້ອມໂຈມຕີເມືອງນາວູ. ຫລັງຈາກໄດ້ສູ້ຮົບກັນຫລາຍວັນ, ໄພ່ພົນຂອງພຣະເຈົ້າທີ່ຍັງເຫລືອຢູ່ ໄດ້ຖືກບັງຄັບໃຫ້ຍອມຈຳນົນ ເພື່ອຮັກສາຊີວິດຂອງຕົນໄວ້ ແລະ ມີໂອກາດທີ່ຈະຂ້າມແມ່ນ້ຳໄປ. ຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ ປະມານ ຫ້າ ເຖິງ ຫົກຮ້ອຍຄົນ ໄດ້ຂ້າມແມ່ນ້ຳ ແລະ ໄດ້ຕັ້ງຄ້າຍພັກຢູ່ແຄມແມ່ນ້ຳ. ປະທານບຣິກຳ ຢັງ ໄດ້ສົ່ງໜ່ວຍຊ່ວຍກູ້ ພ້ອມດ້ວຍສະບຽງອາຫານໄປຊ່ວຍເຫລືອ "ໄພ່ພົນທີ່ຍາກຈົນ" ຜູ້ທີ່ໜີມານັ້ນ.

## 18. ພຣະວິຫານເຊົາເລັກ



ພຣະ ວິຫານ ເຊົາເລັກ, ເບິ່ງ ຈາກ ທາງ ຕາ ເວັນ ອອກ ສ່ຽງເໜືອ. ສອງສາມມື້ຫລັງຈາກກຸ່ມບຸກເບີກໄພ່ພົນຍຸກສຸດທ້າຍ ໄດ້ເຂົ້າມາສູ່ຮ່ອມພູເຊົາເລັກ, ປະທານບຣິກຳ ຢັງ ໄດ້ວາງໄມ້ຄ້ອນເທົ້າຂອງເພິ່ນ ລົງໃສ່ທີ່ດິນ ຕອນໜຶ່ງ ແລະ ໄດ້ປະກາດວ່າ, "ພວກເຮົາຈະສ້າງພຣະວິຫານຂອງພຣະເຈົ້າຢູ່ບ່ອນນີ້." ພິທີຂຸດດິນ ໄດ້ຖືກຈັດຂຶ້ນໃນວັນທີ 14 ເດືອນກຸມພາ, 1853. ໃນວັນທີ 6 ເດືອນເມສາ, 1853, ຫີນເສົາເອກໄດ້ຖືກວາງລົງ. ພຣະວິຫານໄດ້ສຳເລັດ ແລະ ໄດ້ຮັບການອຸທິດ 40 ປີ ຕໍ່ມາ ໃນວັນທີ 6 ເດືອນເມສາ, 1893. ຝ່າຍປະທານສູງສຸດ ແລະ ກຸ່ມອັກຄະສາວົກສິບສອງ ໄດ້ມາຊຸມນຸມກັນຢູ່ໃນພຣະວິຫານນີ້ທຸກອາທິດ ເພື່ອພິຈາລະນາ ແລະ ສະແຫວງຫາການຊີ້ນຳຈາກພຣະຜູ້ເປັນເຈົ້າ ໃນການບໍລິຫານງານ ແລະ ໃນການສ້າງສາອານາຈັກຂອງພຣະເຈົ້າ.

*ເຫດການທີ່ສຳຄັນ:* ພຣະຜູ້ເປັນເຈົ້າໄດ້ມອບວິນຍານແຫ່ງການເປີດເຜີຍຢ່າງຫລວງຫລາຍໃຫ້ແກ່ປະທານ ແລະ ເຈົ້າໜ້າທີ່ຊັ້ນຜູ້ໃຫຍ່ຄົນອື່ນໆຢູ່ໃນນີ້, ລວມທັງຂໍ້ປະກາດຢ່າງເປັນທາງການ 2. ເມື່ອບໍ່ດົນມານີ້, ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງ ໄດ້ອະນຸມັດຢ່າງເປັນເອກະສັນ ແລະ ໄດ້ຈັດພິມໃບ "ຄອບຄົວ: ການປະກາດຕໍ່ໂລກ." ພິທີການຂອງພຣະວິຫານທີ່ໄດ້ຖືກປະຕິບັດສຳລັບທັງຄົນເປັນ ແລະ ຄົນຕາຍ ໄດ້ເປັນພອນໃຫ້ແກ່ຫລາຍລ້ານຄົນ.